# ພຣະຄຣິສຕະທຳຄຳພີ

## ພຣະສັນຍາໃໝ່

ສະບັບ ລາວ-ອີສານ

2019

แปจาก

## พระคริสต์ธรรมคัมภีร์ พันธสัญญาใหม่

### ฉบับภาษาไทยอีสาน

**God's Word For Isan**

Thai-Isan Edition
Sunshine Publications
San Diego, California
By Rev. Ron Myers
RonMyers@IsanBible.org
Copyright © 2015

# ສາລະບານ


ມັດທາຍ ........ 1
ມາຣະໂກ ........ 101
ລູກາ ........ 164
ໂຢຮັນ ........ 268
ກິດຈະການ ........ 350
ໂຣມ ........ 454
1 ໂກຣິນໂທ ........ 501
2 ໂກຣິນໂທ ........ 546
ຄາລາເຕຍ ........ 575
ເອເຟໂຊ ........ 590
ຟີລິບປອຍ ........ 604
ໂກໂລຊາຍ ........ 614
1 ເທຊະໂລນິກາ ........ 625
2 ເທຊະໂລນິກາ ........ 634
1 ຕີໂມທຽວ ........ 639
2 ຕີໂມທຽວ ........ 651
ຕີໂຕ ........ 660
ຟີເລໂມນ ........ 665
ເຮັບເຣີ ........ 667
ຢາໂກໂບ ........ 699
1 ເປໂຕ ........ 709
2 ເປໂຕ ........ 722
1 ໂຢຮັນ ........ 729
2 ໂຢຮັນ ........ 740
3 ໂຢຮັນ ........ 741
ຢູດາ ........ 742
ພຣະນິມິດ ........ 745

# ມັດທາຍ

## ມັດທາຍ ບົດທີ 1

1:1 ໜັງສືເຊື້ອສາຍວົງຕະກູນຂອງ ພຣະເຢຊູຄຣິດ ຕາມລຳດັບ ຜູ້ເພິ່ນເປັນລູກ-
ຫລານຂອງກະສັດ ດາວິດ ກັບເປັນລູກຫລານຂອງ ອັບຣາຮາມ ນຳ
1:2 ອັບຣາຮາມ ໄດ້ລູກຊາຍຊື່ວ່າ ອີຊາກ ແລ້ວ ອີຊາກ ໄດ້ລູກຊາຍຊື່ວ່າ ຢາ-
ໂຄບ ແລ້ວ ຢາໂຄບ ໄດ້ລູກຊາຍຊື່ວ່າ ຢູດາ ກັບພີ່ນ້ອງຂອງເຂົາ
1:3 ແລ້ວ ຢູດາ ໄດ້ລູກຊາຍສອງຄົນຊື່ວ່າ ເປເຣັດ ກັບ ເຊຣາ ເກີດຈາກນາງ ຕາ-
ມາ ແລ້ວ ເປເຣັດ ໄດ້ລູກຊາຍຊື່ວ່າ ເຮັດຊະໂຣນ ແລ້ວ ເຮັດຊະໂຣນ ໄດ້ລູກ-
ຊາຍຊື່ວ່າ ຣາມ
1:4 ແລ້ວ ຣາມ ໄດ້ລູກຊາຍຊື່ວ່າ ອຳມີນາດາບ ແລ້ວ ອຳມີນາດາບ ໄດ້ລູກຊາຍຊື່
ວ່າ ນາໂຊນ ແລ້ວ ນາໂຊນ ໄດ້ລູກຊາຍຊື່ວ່າ ຊານໂມນ
1:5 ແລ້ວ ຊານໂມນ ໄດ້ລູກຊາຍຊື່ວ່າ ໂບອາດ ເກີດຈາກນາງ ຣາຫັບ ແລ້ວ ໂບ-
ອາດ ໄດ້ລູກຊາຍຊື່ວ່າ ໂອເບັດ ເກີດຈາກ ນາງຣຸດ ແລ້ວ ໂອເບັດ ໄດ້ລູກຊາຍຊື່
ວ່າ ເຢຊາຍ
1:6 ແລ້ວ ເຢຊາຍ ໄດ້ລູກຊາຍຊື່ວ່າ ດາວິດ ຜູ້ເປັນກະສັດນັ້ນ ແລ້ວ ດາວິດ ຜູ້ເປັນ
ກະສັດໄດ້ລູກຊາຍຊື່ວ່າ ໂຊໂລໂມນ ເກີດຈາກນາງຊຶ່ງແຕ່ກ່ອນເປັນເມຍຂອງ
*ທະຫານ* ອູຣີຢາ
1:7 ແລ້ວ ໂຊໂລໂມນ ໄດ້ລູກຊາຍຊື່ວ່າ ເຣໂຫໂບອຳ ແລ້ວ ເຣໂຫໂບອຳ ໄດ້ລູກ-
ຊາຍຊື່ວ່າ ອາບີຢາ ແລ້ວ ອາບີຢາ ໄດ້ລູກຊາຍຊື່ວ່າ ອາສາ
1:8 ແລ້ວ ອາສາ ໄດ້ລູກຊາຍຊື່ວ່າ ເຢໂຮຊາຟັດ ແລ້ວ ເຢໂຮຊາຟັດ ໄດ້ລູກຊາຍຊື່
ວ່າ ໂຢຣັມ ແລ້ວ ໂຢຣັມ ໄດ້ລູກຊາຍຊື່ວ່າ ອຸດຊີຢາ
1:9 ແລ້ວ ອຸດຊີຢາ ໄດ້ລູກຊາຍຊື່ວ່າ ໂຢທາມ ແລ້ວ ໂຢທາມ ໄດ້ລູກຊາຍຊື່ວ່າ
ອາຫັດ ແລ້ວ ອາຫັດ ໄດ້ລູກຊາຍຊື່ວ່າ ເຮເຊຄີຢາ
1:10 ແລ້ວ ເຮເຊຄີຢາ ໄດ້ລູກຊາຍຊື່ວ່າ ມານາເຊ ແລ້ວ ມານາເຊ ໄດ້ລູກຊາຍຊື່ວ່າ
ອາໂມນ ແລ້ວ ອາໂມນ ໄດ້ລູກຊາຍຊື່ວ່າ ໂຢຊີຢາ

1:11 ແລ້ວ ໂຢຊີຢາ ໄດ້ລູກຊາຍຊື່ວ່າ ເຢໂຄນີຢາ ກັບພວກພີ່ນ້ອງຂອງເຂົາ ຊຶ່ງຢູ່-
ໃນຍາມທີ່ຊົນຊາດເຂົາຕົກເປັນຊະເລີຍ ຖືກນຳອອກໄປຢູ່ນະຄອນໃຫຍ່ ບາບີ-
ໂລນ
1:12 ຫລັງຈາກພວກເຂົາຕົກເປັນຊະເລີຍ ຖືກນຳອອກໄປຢູ່ນະຄອນໃຫຍ່ ບາບີ-
ໂລນ ແລ້ວ ເຢໂຄນີຢາ ກໍໄດ້ລູກຊາຍຊື່ວ່າ ເຊອານຕີເອນ ແລ້ວ ເຊອານຕີເອນ
ໄດ້ລູກຊາຍຊື່ວ່າ ເຊຣູບາເບັນ
1:13 ແລ້ວ ເຊຣູບາເບັນ ໄດ້ລູກຊາຍຊື່ວ່າ ອາບີອູດ ແລ້ວ ອາບີອູດ ໄດ້ລູກຊາຍຊື່
ວ່າ ເອລີຢາກິມ ແລ້ວ ເອລີຢາກິມ ໄດ້ລູກຊາຍຊື່ວ່າ ອາໂຊ
1:14 ແລ້ວ ອາໂຊ ໄດ້ລູກຊາຍຊື່ວ່າ ສາໂດກ ແລ້ວ ສາໂດກ ໄດ້ລູກຊາຍຊື່ວ່າ
ອາຄິມ ແລ້ວ ອາຄິມ ໄດ້ລູກຊາຍຊື່ວ່າ ເອລີອູດ
1:15 ແລ້ວ ເອລີອູດ ໄດ້ລູກຊາຍຊື່ວ່າ ເອເລອາຊາ ແລ້ວ ເອເລອາຊາ ໄດ້ລູກຊາຍ
ຊື່ວ່າ ມັທທານ ແລ້ວ ມັທທານ ໄດ້ລູກຊາຍຊື່ວ່າ ຢາໂຄບ
1:16 ແລ້ວ ຢາໂຄບ ໄດ້ລູກຊາຍຊື່ວ່າ ໂຢເຊບ ຜູ້ເປັນຜົວຂອງນາງ ມາຣີອາ ຜູ້
ເກີດ ພຣະເຢຊູ ທີ່ເອີ້ນກັນວ່າ ພຣະຄຣິດ ໄດ້ເກີດມາຈາກນາງ ມາຣີອາ ນັ້ນເອງ
1:17 ຈັ່ງຊັ້ນ ຕັ້ງແຕ່ ອັບຣາຮາມ ລົງມາຈົນຮອດ ດາວິດ ຈັ່ງເປັນສິບສີ່ຊົ່ວອາຍຸຄົນ
ກັບນັບຕັ້ງແຕ່ ດາວິດ ລົງມາຈົນຮອດຕົກເປັນຊະເລີຍ ຖືກນຳອອກໄປຢູ່ນະຄອນ
ໃຫຍ່ ບາບີໂລນ ເປັນສິບສີ່ຊົ່ວອາຍຸຄົນ ກັບນັບຕັ້ງແຕ່ຕົກເປັນຊະເລີຍໃນ ບາບີ-
ໂລນ ຈົນຮອດ ພຣະຄຣິດ ມີອີກສິບສີ່ຊົ່ວອາຍຸຄົນ
1:18 ບັດນີ້ ເລື່ອງການເກີດຂອງ ພຣະເຢຊູຄຣິດ ກໍເປັນຈັ່ງຊີ້ ຄືນາງ ມາຣີອາ ຜູ້ເປັນ
ແມ່ນັ້ນ ຕອນໄດ້ໝັ້ນກັນກັບ ໂຢເຊບ ແຕ່ທຳອິດ ປາກົດວ່ານາງມີທ້ອງກ່ອນທີ່ຊິມີ
ການສົມສູ່ນຳກັນ ເປັນດ້ວຍການອັດສະຈັນຂອງ ພຣະວິນຍານ ບໍລິສຸດ *ຂອງ
ພຣະເຈົ້າ*
1:19 ແລ້ວພໍ ໂຢເຊບ ຄູ່ໝັ້ນຊິເປັນຜົວຂອງນາງ ໂດຍທີ່ວ່າເປັນຄົນຍຸດຕິທຳ ລາວ-
ກໍບໍ່ຢາກເປີດເຜີຍຄວາມເປັນໄປຂອງນາງ ໂດຍບໍ່ຢາກເຮັດເປັນໂຕຢ່າງແນວບໍ່ດີ
ໃຫ້ຄົນຮູ້ໄປທົ່ວ ເລີຍຄຶດວ່າຊິຖອນໝັ້ນຢ່າງລັບໆ

1:20 ແຕ່ພໍ ໂຢເຊບ ພວມຄຶດຢູ່ຫັ້ນ ນີ້ແຫລະ ເທວະທູດຂອງອົງພຣະຜູ້ເປັນເຈົ້າ ໄດ້
ມາປາກົດຢູ່ຕໍ່ໜ້າ ໂຢເຊບ ໃນຄວາມຝັນ ບອກວ່າ “ ໂຢເຊບ ລູກ ດາວິດ ເອີຍ ຢ່າ
ສູ່ຢ້ານເດີ້ ທີ່ຊິຮັບເອົາ ມາຣີອາ ມາເປັນເມຍຂອງເຈົ້າເລີຍ ຍ້ອນວ່າ ລູກນ້ອຍທີ່ຢູ່-
ໃນທ້ອງຂອງນາງນັ້ນເປັນໂດຍອຳນາດ ພຣະວິນຍານ ບໍລິສຸດຂອງພຣະເຈົ້າ
1:21 ແລ້ວນາງຊິໄດ້ລູກຊາຍ ຊຶ່ງເຈົ້າຊິເອີ້ນຊື່ຂອງເດັກຜູ້ຊາຍນັ້ນວ່າ ເຢຊູ ຍ້ອນ
ວ່າຜູ້ນັ້ນຊິໂຜດຊ່ອຍຊົນຊາດຂອງເພິ່ນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ
ທັງຫລາຍ”
1:22 ແນວໝູ່ນີ້ໄດ້ເກີດຂຶ້ນກໍເພື່ອຊິໃຫ້ເປັນໄປຕາມ ພຣະຄຳ ຂອງພຣະເຈົ້າ ຕາມທີ່
ອົງພຣະຜູ້ເປັນເຈົ້າໄດ້ເວົ້າໄວ້ກັບຜູ້ເປັນປາກເປັນສຽງ*ຂອງເພິ່ນວ່າ
1:23 “ນີ້ແຫລະ ຍິງພົມມະຈາລີຄົນໜຶ່ງຊິຕັ້ງທ້ອງ ກັບຊິອອກລູກຊາຍຄົນໜຶ່ງ ກັບຜູ້
ຄົນຊິເອີ້ນຊື່ຂອງເພິ່ນວ່າ ເອມານູເອນ ແປວ່າ ພຣະເຈົ້າຢູ່ກັບເຮົາ”
1:24 ບັດ ໂຢເຊບ ຕື່ນຂຶ້ນກໍເຮັດຕາມຄຳຊຶ່ງເທວະທູດຂອງອົງພຣະຜູ້ເປັນເຈົ້າໄດ້
ສັ່ງ ລາວ ນັ້ນ ເລີຍຮັບນາງມາເປັນເມຍຂອງ ລາວ
1:25 ແຕ່ ລາວ ບໍ່ໄດ້ຮ່ວມສົມສູ່ກັນກັບນາງຈົນກວ່ານາງອອກລູກຊາຍຜູ້ກົກນັ້ນ
ແລ້ວ ລາວ ຈັ່ງຕັ້ງຊື່ເດັກນ້ອຍວ່າ ເຢຊູ

## ມັດທາຍ ບົດທີ 2

2:1 ບັດຍາມ ພຣະເຢຊູ ໄດ້ເກີດຢູ່ບ້ານເບັດເລເຮັມແຄວ້ນ ຢູດາຍ ໃນລັດຊະການ
ຂອງກະສັດ ເຮໂຣດ ນັ້ນ ນີ້ແຫລະ ຢູ່ມາມີພວກນັກປັດຊະຍາຈາກທາງຕະເວັນ
ອອກ ໄດ້ເດີນທາງມາຍັງເມືອງ ເຢຣູຊາເລັມ
2:2 ມາຖາມ ເຮໂຣດ ວ່າ “ເດັກນ້ອຍທີ່ເກີດມາເປັນກະສັດຂອງຊົນຊາດ ຢິວ ນັ້ນຢູ່
ໃສ ຄືເຮົາໄດ້ເຫັນດາວຂອງເພິ່ນຢູ່ເທິງຟ້າໃນທາງຕະເວັນອອກ ພວກເຮົາຈັ່ງມາ
ຫວັງຊິເຄົາລົບບູຊາເພິ່ນ”
2:3 ບັດພໍກະສັດ ເຮໂຣດ ໄດ້ຍິນຈັ່ງຊັ້ນແລ້ວ ໃຈເຂົາກໍວຸ້ນວາຍ ພ້ອມທັງໝົດຄູ່ຄົນ
ໃນເມືອງ ເຢຣູຊາເລັມ

* ຜູ້ປະກາດພຣະທຳເປັນຜູ້ເປັນປາກເປັນສຽງຂອງພຣະເຈົ້າ

2:4 ແລ້ວພໍບັດກະສັດ ເຮໂຣດ ໄດ້ເອີ້ນຄະນະຫົວໜ້າປະໂລຫິດ*ໝົດຄູ່ຄືນ ພ້ອມ
ທັງພວກນັກທຳ†ນັ້ນທີ່ມາຈາກປະຊາຊົນມາໂຮມກັນ ແລ້ວ ລາວ ຈັ່ງໄດ້ຖາມ
ພວກເຂົາວ່າ ຜູ້ເປັນ ພຣະຄຣິດ ນັ້ນຊິເກີດຢູ່ໃສ
2:5 ພວກເຂົາເລີຍບອກ ເຮໂຣດ ວ່າ “ຊິເກີດຢູ່ບ້ານເບັດເລເຮັມແຄວ້ນ ຢູດາຍ
ຍ້ອນວ່າມີຜູ້ເປັນປາກເປັນສຽງຂອງພຣະເຈົ້າໄດ້ຂຽນໄວ້ຈັ່ງຊີ້
2:6 ວ່າ ‘ບ້ານເບັດເລເຮັມໃນແຜ່ນດິນຢູດາຍເອີຍ ແມ່ນວ່າເຈົ້າເປັນໝູ່ບ້ານນ້ອຍໆ
ທີ່ສຸດ ໃນພວກຜູ້ປົກຄອງຂອງ ຢູດາຍ ທັງໝົດ ຈັ່ງໃດກໍຕາມ ຊິມີຜູ້ປົກຄອງ *ຜູ້
ຍິ່ງໃຫຍ່ສຳຄັນ* ຜູ້ໜຶ່ງ ທີ່ຊິອອກມາຈາກເຈົ້າ ເປັນຜູ້ທີ່ຊິປົກຄອງຄົນ ອິສະຣາເອນ
ຊົນຊາດຂອງເຮົານັ້ນ’”
2:7 ຫລັງຈາກນັ້ນ ເຮໂຣດ ຈັ່ງເຊີນພວກນັກປັດຊະຍາເຂົ້າມາເປັນການລັບ ສອບ-
ຖາມເຂົາຢ່າງຖີ່ຖ້ວນເຖິງຍາມທີ່ດາວນັ້ນໄດ້ປາກົດຂຶ້ນ
2:8 ແລ້ວ ເຮໂຣດ ໄດ້ໃຫ້ພວກນັກປັດຊະຍາໄປບ້ານເບັດເລເຮັມສັ່ງໄວ້ວ່າ “ໃຫ້ໄປ
ຊອກຫາເດັກນ້ອຍນັ້ນເດີ້ ບັດພໍ້ແລ້ວໃຫ້ຫລົບຄືນມາແຈ້ງເຮົາ ເພື່ອເຮົາຊິໄດ້ໄປ
ເຄົາລົບບູຊາຜູ້ນັ້ນນຳ”
2:9 ບັດພວກເຂົາໄດ້ຟັງກະສັດແລ້ວ ເຂົາກໍໄດ້ອອກໄປ ແລ້ວນີ້ແຫລະ ດາວຊຶ່ງເຂົາ
ໄດ້ເຫັນໃນທາງຕະເວັນອອກນັ້ນກໍໄດ້ນຳໜ້າເຂົາໄປກ່ອນ ຈົນມາຢູ່ເທິງໜ້ອງທີ່
ເດັກນ້ອຍຢູ່ຫັ້ນ
2:10 ບັດພວກນັກປັດຊະຍາໄດ້ເຫັນດາວນັ້ນແລ້ວ ເຂົາກໍດີອົກດີໃຈຢ່າງເຫລືອລົ້ນ
2:11 ແລ້ວບັດພວກເຂົາເຂົ້າໄປໃນເຮືອນ ພໍໄດ້ເຫັນເດັກນ້ອຍກັບນາງ ມາຣີອາ ຜູ້
ເປັນແມ່ແລ້ວ ຈັ່ງຂາບນະມັດສະການເດັກນ້ອຍນັ້ນ ແລ້ວໄດ້ເອົາຊັບສົມບັດຂອງ
ເຂົາອອກມາ ເປັນຂອງຝາກ ຄື ທອງຄຳ ກຳຍານ ກັບຢາງໄມ້ຫອມ ຖວາຍບູຊາ
ເດັກນ້ອຍ
2:12 ແລ້ວພວກນັກປັດຊະຍາ ພໍໄດ້ຮັບຄຳເຕືອນຈາກພຣະເຈົ້າໃນຄວາມຝັນ ວ່າບໍ່
ໃຫ້ກັບໄປຫາ ເຮໂຣດ ເຂົາເລີຍກັບເມືອບ້ານຂອງເຂົາໂດຍທາງອື່ນ

* ປະໂລຫິດເປັນຜູ້ນຳເຄື່ອງຖວາຍ

† ນັກທຳເປັນອາຈານ ພຣະທຳ ພຣະເຈົ້າ

2:13 ບັດເຂົາເດີນທາງອອກໄປແລ້ວ ນີ້ແຫລະ ເທວະທູດຂອງອົງພຣະຜູ້ເປັນເຈົ້າ
ໄດ້ມາປາກົດຢູ່ຕໍ່ໜ້າ ໂຢເຊບ ໃນຄວາມຝັນ ບອກວ່າ "ໃຫ້ລຸກຂຶ້ນພາເດັກນ້ອຍ
ກັບແມ່ໜີໄປປະເທດ ເອຢິບ ທັນທີ ແລ້ວໃຫ້ຄອຍຖ້າຢູ່ຫັ້ນຈົນກວ່າເຮົາຊິບອກ
ເຈົ້າ ຍ້ອນວ່າ ເຮໂຣດ ຊິຊອກຫາເດັກນ້ອຍນັ້ນເພື່ອຢາກຊິຂ້າຊິເຮັດຮ້າຍ"
2:14 ແລ້ວໃນຍາມກາງຄືນ ໂຢເຊບ ຈັ່ງລຸກຂຶ້ນພາເດັກນ້ອຍກັບແມ່ ເດີນທາງອອກ
ໄປຍັງປະເທດ ເອຢິບ
2:15 ແລ້ວກໍຢູ່ຫັ້ນຈົນຮອດ ເຮໂຣດ ຕາຍ ແນວໝູ່ນີ້ໄດ້ເກີດຂຶ້ນເພື່ອຊິໃຫ້ເປັນໄປ
ຕາມ ພຣະຄໍາ ຂອງອົງພຣະຜູ້ເປັນເຈົ້າຊຶ່ງຜູ້ເປັນປາກເປັນສຽງຂອງເພິ່ນໄດ້ເວົ້າ
ໄວ້ວ່າ "ເຮົາໄດ້ເອີ້ນລູກຊາຍຂອງເຮົາອອກມາຈາກປະເທດ ເອຢິບ "
2:16 ພໍບັດ ເຮໂຣດ ເຫັນວ່າພວກນັກປັດຊະຍາເວົ້າເລ່ລ້ຽມກັບ ລາວ ກໍຢາກຮ້າຍ
ຢ່າງໃຫຍ່ ຈັ່ງສັ່ງໃຫ້ອອກໄປຂ້າເດັກໃນບ້ານເບັດເລເຮັມກັບໝ້ອງໃກ້ຄຽງໃຫ້
ຕາຍທັງໝົດບໍ່ໃຫ້ເຫລືອ ຕັ້ງແຕ່ອາຍຸສອງປີລົງມາ ຊຶ່ງພໍດີກັນກັບຍາມທີ່ ເຮໂຣດ
ໄດ້ສອບຖາມພວກນັກປັດຊະຍາແຕ່ທໍາອິດນັ້ນ
2:17 ນັ້ນກໍເປັນໄປຕາມ ພຣະຄໍາ ຂອງພຣະເຈົ້າທີ່ເວົ້າໂດຍ ເຢເຣມີຢາ ຜູ້ເປັນປາກ-
ເປັນສຽງຂອງເພິ່ນວ່າ
2:18 "ໃນໝູ່ບ້ານ ຣາມາ ນັ້ນກໍໄດ້ຍິນສຽງຮ້ອງໄຫ້ເສຍໃຈກັບໂສກເສົ້າຢ່າງຂະໜ
າດ ຄືເປັນສຽງຂອງນາງ ຣາເຊັນ ຮ້ອງໄຫ້ຍ້ອນລູກໆ ຂອງນາງ ນາງຈັ່ງບໍ່ຍອມ-
ຮັບການເລົ້າໂລມປອບໃຈ ຍ້ອນວ່າລູກທັງຫລາຍນັ້ນບໍ່ມີແລ້ວ"
2:19 ແຕ່ນີ້ແຫລະ ບັດ ເຮໂຣດ ຕາຍແລ້ວ ເທວະທູດອົງໜຶ່ງຂອງອົງພຣະຜູ້ເປັນ-
ເຈົ້າ ໄດ້ມາປາກົດໃນຄວາມຝັນຂອງ ໂຢເຊບ ທີ່ປະເທດ ເອຢິບ
2:20 ສັ່ງວ່າ "ໃຫ້ລຸກຂຶ້ນພາເດັກນ້ອຍກັບແມ່ຫລົບໄປຍັງແຜ່ນດິນອິດສະຣາເອນ
ຍ້ອນວ່າພວກຄົນທີ່ຊອກຫາຊີວິດຂອງເດັກນ້ອຍນັ້ນໄດ້ຕາຍໄປແລ້ວ"
2:21 ໂຢເຊບ ຈັ່ງລຸກຂຶ້ນພາເດັກນ້ອຍກັບແມ່ ພາເມືອແຜ່ນດິນອິດສະຣາເອນ
2:22 ແຕ່ບັດພໍໄດ້ຂ່າວວ່າ ອາເຄລາວ ຜູ້ເປັນລູກຂອງ ເຮໂຣດ ຄອບຄອງຢູ່
ແຄວ້ນ ຢູດາຍ ແທນພໍ່ ກໍເກີດຢ້ານທີ່ຊິໄປຢູ່ຫັ້ນ ຈັ່ງອ້ອມໄປທາງແຄວ້ນ ກາລີເລ
ຕາມຄໍາເຕືອນຈາກພຣະເຈົ້າທີ່ໄດ້ຮັບໃນຄວາມຝັນ

2:23 ແລ້ວພໍມາຮອດເມືອງໜຶ່ງຊື່ວ່າ ນາຊາເຣັດ ລາວກໍຕັ້ງຫລັກຕັ້ງຖານຢູ່ທັ້ນ ກໍ
ເພື່ອຊິເປັນໄປຕາມ ພຣະຄຳ ຂອງພຣະເຈົ້າຊຶ່ງພວກຜູ້ເປັນປາກເປັນສຽງຂອງ
ເພິ່ນໄດ້ເວົ້າໄວ້ວ່າ “ເຂົາຊິເອີ້ນເພິ່ນວ່າຊາວ ນາຊາເຣັດ ”

## ມັດທາຍ ບົດທີ 3

3:1 ໃນຍາມນັ້ນ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳ ມາປະກາດໃນຖິ່ນແຫ້ງແລ້ງຂອງ
ແຄວ້ນ ຢູດາຍ
3:2 ເວົ້າວ່າ “ໃຫ້ພວກເຈົ້າກັບໃຈໃໝ່ເດີ້ ຍ້ອນວ່າລາຊະອານາຈັກສະຫວັນໃກ້ຊິມາ
ຮອດແລ້ວ”
3:3 ຄື ໂຢຮັນ ຜູ້ນີ້ເນາະ ຊຶ່ງ ເອຊາຢາ ຜູ້ເປັນປາກເປັນສຽງຂອງພຣະເຈົ້າເວົ້າເຖິງ
ວ່າ “ມີສຽງຂອງຜູ້ໜຶ່ງຮ້ອງໃນຖິ່ນແຫ້ງແລ້ງ ບອກວ່າ ໃຫ້ກຽມຫົນທາງໄວ້ໃຫ້
ພຣະຜູ້ເປັນເຈົ້າເດີ້ ແລ້ວເຮັດໃຫ້ຫົນທາງຂອງເພິ່ນນັ້ນໃຫ້ມັນຊື່ກົງເດີ້”
3:4 ແລ້ວ ໂຢຮັນ ຜູ້ນີ້ນຸ່ງເສື້ອຜ້າເຮັດດ້ວຍຂົນອູດ ຄາດແອວດ້ວຍໜັງສັດ ກັບແນວ
ກິນຂອງ ລາວ ຄືຕັກແຕນກັບນ້ຳເຜີ້ງປ່າ
3:5 ຍາມນັ້ນ ຊາວເມືອງ ເຢຣູຊາເລັມ ກັບຄົນທົ່ວແຄວ້ນ ຢູດາຍ ພ້ອມທັງຄົນທົ່ວ
ບໍລິເວນລ້ອມຮອບແມ່ນ້ຳ ຢໍດາເນ ກໍອອກໄປຫາ ໂຢຮັນ
3:6 ແລ້ວຕ່າງຄົນຕ່າງໄດ້ຮັບພິທີຈຸ່ມນ້ຳຈາກ ໂຢຮັນ ໃນແມ່ນ້ຳ ຢໍດາເນ ດ້ວຍການ
ສາລະພາບຄວາມຜິດບາບຂອງໂຕ
3:7 ແຕ່ບັດພໍ ໂຢຮັນ ເຫັນພວກ ຟາຣີຊາຍ ກັບພວກ ຊາດູກາຍ ພາກັນອອກມາ
ຫລາຍ ເພື່ອຮັບພິທີຈຸ່ມນ້ຳສະແດງການກັບໃຈໃໝ່ນຳ ລາວ ລາວ ຈັ່ງບອກ
ພວກເຂົາວ່າ “ໂອ້ ເຈົ້າຊາດງູຮ້າຍ ໃຜເຕືອນເຈົ້າໃຫ້ໜີຈາກໂທດອັນຮ້າຍແຮງທີ່ຊິ
ມາຮອດມາເຖິງນັ້ນ
3:8 ຈັ່ງຊັ້ນ ໃຫ້ສະແດງຜົນຂອງການກັບໃຈເດີ້ ຊຶ່ງພິສູດວ່າໄດ້ກັບໃຈໃໝ່ອີຫລີ
3:9 ແຕ່ຢ່ານຶກໃນໃຈວ່າ ອັບຣາຮາມ ເປັນພໍ່ຂອງພວກເຮົາ ຄືເຮົາຊິບອກພວກເຈົ້າ
ວ່າ ພຣະເຈົ້າສາມາດທີ່ຊິເຮັດໃຫ້ກ້ອນຫີນແນວໝູ່ນີ້ ຂຶ້ນມາເປັນລູກໆ ຂອງ ອັບ-
ຣາຮາມ ໄດ້ ໂລດ

3:10 ຄື ບັດນີ້ຂວານ *ຂອງພຣະເຈົ້າ* ໄດ້ວາງໃສ່ເຫງົ້າຂອງໝູ່ກົກໄມ້ນັ້ນແລ້ວ ຈັ່ງຊັ້ນ
ຄູ່ກົກທີ່ບໍ່ເກີດໝາກເກີດຜົນອັນດີຊິຕ້ອງຖືກບັກລົງ ໂຍນຖິ້ມໃສ່ກອງໄຟ ໂລດ
3:11 ແມ່ນຢູ່ ເຮົານີ້ໃຫ້ພວກເຈົ້າຮັບຈຸ່ມນໍ້າໃຫ້ສະແດງການກັບໃຈໃໝ່ ແຕ່ເພິ່ນຜູ້-
ນັ້ນທີ່ຊິມາຕາມຫລັງເຮົາ ເພິ່ນມີອຳນາດຫລາຍກວ່າເຮົາອີກ ຊຶ່ງເຮົາເອງບໍ່ສົມ-
ຄວນແມ່ນແຕ່ຊິຖືເກີບໃຫ້ເພິ່ນ ແລ້ວເພິ່ນກໍຊິໃຫ້ການຈຸ່ມໂດຍ ພຣະວິນຍານ ກັບ
ໂດຍໄຟ
3:12 ຊຶ່ງມືຂອງເພິ່ນຖືດົ້ງຟັດເຂົ້າ ພ້ອມແລ້ວທີ່ຊິກວາດລ້າງລານເຂົ້າຂອງເພິ່ນໃຫ້
ໝົດ ແລ້ວຊິເກັບເຂົ້າຂອງເພິ່ນມ້ຽນໄວ້ໃນເລົ້າເຂົ້າ ແຕ່ເພິ່ນກໍຊິເຜົາຂີ້ແກບດ້ວຍ
ໄຟທີ່ບໍ່ຮູ້ຈັກມອດ”
3:13 ໂຢຮັນ ເວົ້າແລ້ວ ພຣະເຢຊູ ອອກຈາກແຄວັ້ນ ກາລີເລ ມາຫາ ລາວ ຢູ່ແມ່ນໍ້າ
ຢໍດາເນ ເພື່ອຊິຮັບພິທີຈຸ່ມນໍ້ານຳ ລາວ
3:14 ແຕ່ ໂຢຮັນ ບອກເພິ່ນວ່າ “ຢ່າເລີຍ ຜູ້ຂ້າຕ້ອງການຊິຮັບການຈຸ່ມຈາກທ່ານ
ຕ່າງຫາກ ແລ້ວເປັນຫຍັງທ່ານອອກມາຫາຜູ້ຂ້ານີ້”
3:15 ແລ້ວ ພຣະເຢຊູ ຕອບ ໂຢຮັນ ວ່າ “ບັດນີ້ໃຫ້ຍອມເຮັດໃຫ້ຊະ ຍ້ອນສົມຄວນທີ່
ເຮົາຊິເຮັດຕາມຄູ່ແນວໃຫ້ມັນຖືກຕ້ອງ” ແລ້ວລາວກໍຍອມເຮັດຕາມທີ່ເພິ່ນຕ້ອງ-
ການ
3:16 ແລ້ວພໍ ພຣະເຢຊູ ໄດ້ຮັບພິທີຈຸ່ມນໍ້າແລ້ວ ພໍຂຶ້ນຈາກນໍ້າມາພໍດີ ນີ້ແຫລະ ທ້ອງ
ຟ້າກໍແຫວກອອກ ແລ້ວເພິ່ນຫລຽວເບິ່ງເຫັນ ພຣະວິນຍານ ຂອງພຣະເຈົ້າລົງມາ
ຄືກັນກັບນົກເຂົາ ມາຢູ່ນຳເພິ່ນ
3:17 ແລ້ວນີ້ແຫລະ ມີສຽງຂອງຜູ້ມີອຳນາດເວົ້າຈາກຟ້າສະຫວັນວ່າ “ເຈົ້າຜູ້ນີ້ເປັນ
ລູກທີ່ຮັກຂອງເຮົາ ຊຶ່ງເຮົາພໍໃຈຫລາຍ”

## ມັດທາຍ ບົດທີ 4

4:1 ຫວ່າງນັ້ນ ພຣະວິນຍານ ໄດ້ນຳ ພຣະເຢຊູ ເຂົ້າໄປໃນຖິ່ນແຫ້ງແລ້ງ ເພື່ອຊິຖືກ
ຜີ ພະຍາມານ ຊາຕານທົດລອງ
4:2 ກັບບັດເພິ່ນໄດ້ອົດເຂົ້າປາອາຫານສີ່ສິບມື້ສີ່ສິບຄືນແລ້ວ ເພິ່ນກໍຫິວຢາກກິນ

4:3 ຜີ ພະຍາມານ ຊາຕານ ຜູ້ທົດລອງນັ້ນ ເລີຍມາຫາເພິ່ນ ສະເໜີວ່າ “ຄັນເຈົ້າ
ເປັນ ພຣະບຸດ ຂອງພຣະເຈົ້າອີຫລີ ກໍໃຫ້ສັ່ງກ້ອນຫີນແນວໝູ່ນີ້ໃຫ້ເປັນກ້ອນເຂົ້າ-
ຈີ່ແມະ”
4:4 ສ່ວນ ພຣະເຢຊູ ກໍຕອບວ່າ “ມີຂໍ້ຂຽນໄວ້ *ໃນ ພຣະຄຳ* ແລ້ວວ່າ ‘ຄົນຊິບໍ່ໄດ້
ລ້ຽງຊີວິດດ້ວຍອາຫານການກິນແນວດຽວ ແຕ່ດ້ວຍໝົດຄູ່ຄຳທີ່ອອກມາຈາກປາກ
ຂອງພຣະເຈົ້າ’”
4:5 ແລ້ວຜີ ພະຍາມານ ຊາຕານໄດ້ນຳ ພຣະເຢຊູ ຂຶ້ນໄປຍັງນະຄອນບໍລິສຸດ *(ຄື
ເມືອງ ເຢຣູຊາເລັມ ) ແລ້ວ* ຕັ້ງໃຫ້ເພິ່ນຢູ່ເທິງຍອດແຫລມຫຼັງຄາພຣະວິຫານ
4:6 ແລ້ວສະເໜີຕໍ່ເພິ່ນອີກວ່າ “ຄັນເຈົ້າເປັນ ພຣະບຸດ ຂອງພຣະເຈົ້າອີຫລີ ໃຫ້ເຈົ້າ
ໂດດລົງໄປແມະ ຍ້ອນມີຂໍ້ຂຽນໄວ້ *ໃນ ພຣະຄຳ* ແລ້ວວ່າ ‘ພຣະເຈົ້າຊິສັ່ງພວກ
ເທວະທູດຂອງເພິ່ນໃຫ້ເບິ່ງແຍງ ຍົກຊູເຈົ້າໄວ້ໃນມື ເພື່ອບໍ່ໃຫ້ຕີນຂອງເຈົ້າຕຳ
ກ້ອນຫີນຈັກເທື່ອ’”
4:7 ພຣະເຢຊູ ຈັ່ງຕອບມັນຊ້ຳອີກວ່າ “ມີຂໍ້ຂຽນໄວ້ໃນ ພຣະຄຳ ອີກວ່າ ‘ຢ່າທົດ-
ລອງອົງພຣະຜູ້ເປັນເຈົ້າ ຜູ້ເປັນພຣະເຈົ້າຂອງເຈົ້າເດີ້’”
4:8 ຕໍ່ມາ ຜີ ພະຍາມານ ຊາຕານໄດ້ນຳ ພຣະເຢຊູ ຂຶ້ນໄປເທິງຫລັງພູເຂົາສູງໆ
ແລ້ວຈັ່ງຊີ້ໃຫ້ເບິ່ງອານາຈັກໝົດຄູ່ໝ້ອງຢູ່ທົ່ວແຜ່ນດິນໂລກ ທັງສັກສີຂອງມັນໃຫ້
ເພິ່ນໄດ້ເຫັນ
4:9 ແລ້ວມັນຈັ່ງສະເໜີຕໍ່ເພິ່ນອີກວ່າ “ຄັນເຈົ້າຊິຂາບລົງເຄົາລົບບູຊາເຮົາ ເຮົາກໍຊິ-
ມອບໝົດຄູ່ອັນຄູ່ແນວທັງປວງແນວໝູ່ນີ້ໃຫ້ເຈົ້າ ໂລດ ”
4:10 ພຣະເຢຊູ ຈັ່ງຕອບມັນວ່າ “ອ້າຍຜີພະຍາມານຊາຕານ ໃຫ້ມຶງອອກໄປໃຫ້ພົ້ນ
ເດີ້ ຍ້ອນມີຂໍ້ຂຽນໄວ້ *ໃນ ພຣະຄຳ* ແລ້ວວ່າ ‘ໃຫ້ເຄົາລົບບູຊາອົງພຣະຜູ້ເປັນເຈົ້າ
ຜູ້ເປັນພຣະເຈົ້າຂອງເຈົ້າ ກັບຮັບໃຊ້ເພິ່ນແຕ່ຜູ້ດຽວ’”
4:11 ແລ້ວຜີ ພະຍາມານ ຊາຕານຈັ່ງອອກຈາກ ພຣະເຢຊູ ໄປ ແລ້ວນີ້ແຫລະ ມີໝູ່
ເທວະທູດມາຮັບໃຊ້ເພິ່ນ
4:12 ບັດພໍ ພຣະເຢຊູ ໄດ້ຍິນວ່າ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳ ໄດ້ຖືກຂັງໄວ້ຢູ່ໃນຄຸກ
ເພິ່ນກໍໄດ້ອອກໄປຍັງແຄວ້ນ ກາລີເລ

4:13 ບັດອອກຈາກເມືອງ ນາຊາເຣັດ ແລ້ວ ເພິ່ນກໍເຂົ້າເມືອງ ກາເປນາອູມ ຊຶ່ງຢູ່
ຮິມທະເລ ໃນເຂດແດນ ເຊບູໂລນ ກັບ ເນບທາລີ
4:14 ອັນນີ້ກໍເພື່ອຊິເປັນໄປຕາມ ພຣະຄຳ ຂອງພຣະເຈົ້າ ຊຶ່ງເວົ້າໄວ້ໂດຍ ເອຊາຢາ
ຜູ້ເປັນປາກເປັນສຽງຂອງພຣະເຈົ້າ
4:15 ວ່າ “ຝ່າຍ ແຄວ້ນ ເຊບູໂລນ ກັບ ແຄວ້ນ ເນບທາລີ ທາງຂ້າງທະເລຟາກແມ່-
ນ້ຳ ຢໍດາເນ ຝັ່ງພູ້ນ ຄື ກາລີເລ ຂອງພວກຄົນຕ່າງຊາດ
4:16 ຄືໝູ່ພວກຄົນທີ່ນັ່ງຢູ່ໃນຄວາມມືດນັ້ນ ເຂົາໄດ້ເຫັນຄວາມສະຫວ່າງອັນຍິ່ງ-
ໃຫຍ່ແລ້ວ ແລ້ວຝ່າຍພວກຄົນຜູ້ທີ່ນັ່ງຢູ່ໃນແດນເງົາຂອງຄວາມຕາຍນັ້ນ ກໍມີ
ແສງສະຫວ່າງເກີດຂຶ້ນສ່ອງໃຫ້ເຂົາແລ້ວ”
4:17 ຕັ້ງແຕ່ນັ້ນມາ ພຣະເຢຊູ ໄດ້ຕັ້ງຕົ້ນປະກາດວ່າ “ໃຫ້ກັບໃຈໃໝ່ເດີ້ ຍ້ອນວ່າ
ລາຊະອານາຈັກສະຫວັນໃກ້ຊິມາຮອດແລ້ວ”
4:18 ແລ້ວບັດ ພຣະເຢຊູ ພວມຍ່າງຕາມຊາຍທະເລ ກາລີເລ ກໍຫລຽວເບິ່ງເຫັນ
ສອງພີ່ນ້ອງ ຄື ຊີໂມນ ທີ່ເອີ້ນວ່າ ເປໂຕ ກັບ ອັນເດອາ ນ້ອງຊາຍຂອງເຂົາ ພວມ-
ຂວ້າງແຫຢູ່ໃນທະເລ ຍ້ອນວ່າເຂົາມີອາຊີບຫາປາ
4:19 ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ “ໃຫ້ຕາມເຮົາມາເດີ້ ແລ້ວເຮົາຊິໃຫ້ເປັນຜູ້ຫາ
ຄົນແທນຫາປາ”
4:20 ເຂົາທັງສອງໄດ້ປະອວນໄວ້ ແລ້ວຕາມ ພຣະເຢຊູ ໄປ ໂລດ
4:21 ແລ້ວພໍເພິ່ນຍ່າງໄປຕໍ່ ກໍຫລຽວເບິ່ງເຫັນສອງພີ່ນ້ອງອີກພວກໜຶ່ງ ຄື ຢາໂກ-
ໂບ ລູກຊາຍ ເຊເບດາຍ ກັບ ໂຢຮັນ ນ້ອງຊາຍຂອງເຂົາ ພວມຊຸນອວນຢູ່ໃນ
ເຮືອກັບ ເຊເບດາຍ ພໍ່ຂອງເຂົາ ພຣະເຢຊູ ຈັ່ງໄດ້ເອີ້ນເຂົາໃຫ້ຕາມເພິ່ນໄປນຳ
4:22 ແລ້ວໃນຍາມນັ້ນພໍດີ ເຂົາທັງສອງກໍປະເຮືອກັບລາພໍ່ ຕາມ ພຣະເຢຊູ ໄປຄື
ກັນ
4:23 ແລ້ວ ພຣະເຢຊູ ໄດ້ໄປລ້ອມຮອບທົ່ວແຄວ້ນ ກາລີເລ ສອນໃນສາລາທຳຂອງ
ເຂົາຢູ່ຫັ້ນ ຈັ່ງໄດ້ປະກາດຂ່າວດີອັນປະເສີດເລື່ອງລາຊະອານາຈັກຂອງພຣະເຈົ້າ
ກັບໄດ້ປົວໂລກາໄພໄຂ້ເຈັບໝົດຄູ່ແນວຂອງຊາວເມືອງໃຫ້ດີໃຫ້ເຂົາ

4:24 ແລ້ວຊື່ສຽງຂອງ ພຣະເຢຊູ ກໍເລື່ອງລືໄປຮອດທົ່ວປະເທດ ຊີເຣຍ ຊາວບ້ານ-
ຊາວເມືອງຈັ່ງພາພວກຄົນເຈັບເປັນພະຍາດຕ່າງໆ ກັບຄົນທີ່ທົນທຸກທົນຍາກ ກັບ
ຄົນທີ່ຖືກວິນຍານຊົ່ວຄອບງໍາ ກັບຄົນບ້າທີ່ບໍ່ມີສະຕິ ກັບຄົນເປັນອໍາມະພາດ ມາ
ຫາ ພຣະເຢຊູ ເພິ່ນກໍໄດ້ປົວເຂົາໃຫ້ດີໃຫ້ເຊົາ
4:25 ແລ້ວມີຄົນກຸ່ມໃຫຍ່ມາຈາກແຄວ້ນ ກາລີເລ ກັບແຄວ້ນ ສິບເມືອງ ກັບເມືອງ
ເຢຣູຊາເລັມ ກັບແຄວ້ນ ຢູດາຍ ກັບແມ່ນໍ້າ ຢໍດາເນ ຟາກພູ້ນ ໄດ້ຕິດຕາມເພິ່ນໄປ

## ມັດທາຍ ບົດທີ 5

5:1 ພໍຫລຽວເບິ່ງເຫັນຄົນຫລວງຫລາຍແລ້ວ ພຣະເຢຊູ ເລີຍຂຶ້ນໄປເທິງພູເຂົາ ບັດ
ພໍເພິ່ນນັ່ງລົງແລ້ວ ພວກລູກສິດໄດ້ເຂົ້າມາຫາເພິ່ນ
5:2 ແລ້ວ ພຣະເຢຊູ ໄດ້ເອີ່ຍປາກ ຕັ້ງຕົ້ນສອນເຂົາວ່າ
5:3 "ສ່ວນຜູ້ທີ່ຍາກຈົນຕົກຕໍ່າຝ່າຍຈິດວິນຍານ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນລາຊະ-
ອານາຈັກສະຫວັນເປັນຂອງເຂົາຢູ່ແລ້ວ
5:4 ສ່ວນຜູ້ທີ່ໂສກເສົ້າໄວ້ທຸກ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າເຂົາຊິໄດ້ຮັບການ
ປອບໂຍນ
5:5 ສ່ວນຜູ້ທີ່ມີໃຈອ່ອນນ້ອມ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າເຂົາຊິໄດ້ຮັບແຜ່ນດິນ-
ໂລກເປັນມໍລະດົກ
5:6 ສ່ວນຜູ້ທີ່ຫິວກະຫາຍຕາມຄວາມທ່ຽງທໍາ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າເຂົາຊິ
ໄດ້ອີ່ມໜໍາ
5:7 ສ່ວນຜູ້ທີ່ມີໃຈເມດຕາ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າເຂົາຊິໄດ້ຮັບຄວາມເມດ-
ຕາຄືກັນ
5:8 ສ່ວນຜູ້ທີ່ມີໃຈບໍລິສຸດ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າເຂົາຊິໄດ້ເຫັນພຣະເຈົ້າ
5:9 ສ່ວນຜູ້ທີ່ສ້າງສັນຕິພາບ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າຜູ້ຄົນຊິໄດ້ເອີ້ນເຂົາວ່າ
ເປັນລູກຂອງພຣະເຈົ້າ
5:10 ສ່ວນຜູ້ທີ່ຖືກຂົ່ມເຫງຍ້ອນຄວາມທ່ຽງທໍາ ຜູ້ນັ້ນໄດ້ພົບເປັນສຸກ ຍ້ອນວ່າລາ-
ຊະອານາຈັກສະຫວັນເປັນຂອງເຂົາແລ້ວ

5:11 ສ່ວນຜູ້ທີ່ຖືກຄົນປະຈານ ນິນທາໃສ່ຮ້າຍເປັນຄວາມບໍ່ຈິງຍ້ອນເຫັນແກ່ເຮົາ
ຜູ້ນັ້ນໄດ້ພົບເປັນສຸກ
5:12 ກໍໃຫ້ດີອົກດີໃຈໄວ້ຢ່າງເຫລືອລົ້ນເດີ້ ຍ້ອນວ່າບໍາເໜັດລາງວັນຂອງເຈົ້າມີຄົບ
ບໍລິບູນໃນສະຫວັນ ຄືຄົນເຄີຍຂົ່ມເຫງພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ
ກ່ອນເຈົ້າຄືກັນ
5:13 ພວກເຈົ້າເປັນຄືເກືອຂອງໂລກ ແຕ່ຄັ່ນເກືອນັ້ນໝົດລົດຊາດໄປແລ້ວ ຊິໃຊ້
ເປັນເກືອອີກຕໍ່ໄປໄດ້ຈັ່ງໃດ ມັນກໍບໍ່ເປັນປະໂຫຍດອີຫຍັງ ມີແຕ່ຊິຖອກອອກໃສ່
ທາງໃຫ້ຄົນຢຽບໄປຢຽບມາຊື່ໆ
5:14 ແລ້ວພວກເຈົ້າເປັນແສງສະຫວ່າງຂອງໂລກນໍາ ຄືເມືອງໃດໆ ຊຶ່ງຕັ້ງຢູ່ເທິງ
ຍອດໂນນພູຊິບໍ່ສາມາດປິດບັງໄວ້ໄດ້ເລີຍ
5:15 ຄືວ່າ ເຄີຍມີໃຜແໜ່ທີ່ໄຕ້ຕະກຽງ ແລ້ວກໍເອົາຄຸໄວ້ ມີແຕ່ຊິຕັ້ງໄວ້ເທິງແທ່ນ-
ຕະກຽງ ເພື່ອຊິສ່ອງແສງໃຫ້ຄູ່ຄົນໃນເຮືອນນັ້ນເຫັນຮຸ່ງ
5:16 ຈັ່ງຊັ້ນ ໃຫ້ແສງສະຫວ່າງຂອງເຈົ້າສ່ອງອອກໄປຕໍ່ໜ້າຕໍ່ຕາຂອງຄົນທັງ-
ຫລາຍເດີ້ ເພື່ອເຂົາຊິໄດ້ເຫັນຄວາມດີຄວາມງາມທີ່ເຈົ້າເຮັດ ແລ້ວເຂົາກໍຊິຍົກ-
ຍ້ອງສັນລະເສີນພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ເພິ່ນຢູ່ໃນສະຫວັນ
5:17 ຢ່າໄປຄຶດວ່າເຮົານີ້ມາເພື່ອຊິທໍາລາຍກົດບັນຍັດຂອງພຣະເຈົ້ານັ້ນ ຫລືຄໍາ
ເວົ້າຂອງຜູ້ເປັນປາກເປັນສຽງຂອງເພິ່ນ ເຮົາບໍ່ໄດ້ມາເພື່ອທໍາລາຍດອກ ແຕ່ມາ
ເພື່ອຊິໃຫ້ສໍາເລັດ
5:18 ຄືເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ເຖິງແມ່ນວ່າຟ້າກັບດິນຊິລ່ວງ-
ໄປ ແມ່ນແຕ່ອັກສອນດຽວ ຫລືຈຸດດຽວໃນກົດບັນຍັດ ກໍຊິບໍ່ສູນເສຍໄປຈັກໜ່ອຍ
ຈົນກວ່າຊິສໍາເລັດທັງໝົດ
5:19 ຈັ່ງຊັ້ນ ຜູ້ໃດກໍຕາມທີ່ບໍ່ເຮັດຕາມຂໍ້ນ້ອຍໆແມ່ນແຕ່ຂໍ້ດຽວໃນກົດບັນຍັດນີ້ ທັງ
ສອນຄົນອື່ນບໍ່ໃຫ້ເຮັດຕາມຄືກັນ ຜູ້ນັ້ນຊິເອີ້ນກັນວ່າ ເປັນຜູ້ນ້ອຍໆທີ່ສຸດໃນລາ-
ຊະອານາຈັກສະຫວັນ ແຕ່ຜູ້ໃດທີ່ເຮັດຕາມ ກັບສອນຄົນອື່ນໃຫ້ເຮັດຕາມຄືກັນ
ຜູ້ນັ້ນຊິເອີ້ນກັນວ່າ ເປັນໃຫຍ່ໃນລາຊະອານາຈັກສະຫວັນ

5:20 ຄື ເຮົາຊິບອກພວກເຈົ້າ ໂລດ ນອກຈາກຄວາມຊອບທຳຂອງເຈົ້າຊິເກີນກວ່າ
ຄວາມຊອບທຳຂອງນັກທຳກັບພວກ ຟາຣີຊາຍ ເຈົ້າຊິບໍ່ມີທາງເຂົ້າໃນລາຊະອາ-
ນາຈັກສະຫວັນເປັນອັນຂາດ
5:21 ພວກເຈົ້າເຄີຍໄດ້ຍິນເຖິງຖ້ອຍຄຳບູຮານວ່າ 'ຢ່າຂ້າຄົນ' ຄັນແມ່ນໃຜຂ້າຄົນ
ຜູ້ນັ້ນຊິຕ້ອງຖືກພິພາກສາລົງໂທດ
5:22 ແຕ່ເຮົາຊິບອກພວກເຈົ້າວ່າ ຜູ້ໃດກໍຕາມທີ່ຊິຮ້າຍພີ່ນ້ອງຂອງໂຕໂດຍບໍ່ມີເຫດ
ຜູ້ນັ້ນ ອາດ ຊິຖືກພິພາກສາລົງໂທດ ແລ້ວຜູ້ໃດທີ່ຊິເວົ້າກັບພີ່ນ້ອງວ່າ 'ມຶງບໍ່ມີປະ-
ໂຫຍດ' ຜູ້ນັ້ນ ອາດ ຊິຖືກນຳໄປທີ່ສານສູງ ກັບຜູ້ໃດຊິວ່າ 'ຄົນໂງ່ຈ້າ' ຜູ້ນັ້ນຊິເປັນ
ໂທດເຖິງໄຟນະລົກ
5:23 ຈັ່ງຊັ້ນ ຄັນເຈົ້ານຳເຄື່ອງບູຊາມາເຖິງແທ່ນບູຊາແລ້ວ ກັບຄຶດຂຶ້ນໄດ້ວ່າພີ່ນ້ອງ
ຍັງມີເຫດຂັດເຄືອງກັບເຈົ້າ
5:24 ກໍໃຫ້ວາງເຄື່ອງບູຊາໄວ້ໜ້າແທ່ນນັ້ນ ແລ້ວຫລົບເມືອຄືນດີກັບຜູ້ນັ້ນເສຍກ່ອນ
ແລ້ວຈັ່ງຄ່ອຍມາຖວາຍເຄື່ອງບູຊາຂອງເຈົ້າ
5:25 ໃຫ້ປອງດອງຕົກລົງກັນກັບຄູ່ຄວາມຢ່າງໄວໆ ເດີ້ ບັດພວມຢູ່ໃນເສັ້ນທາງ
*(ໄປຂຶ້ນສານ)* ນຳກັນ ບໍ່ຊັ່ນຢ້ານວ່າຫາລາງເທື່ອຄູ່ຄວາມນັ້ນຊິຟ້ອງຮ້ອງມອບ
ເຈົ້າໄວ້ກັບຜູ້ພິພາກສາ ແລ້ວຜູ້ພິພາກສາຊິມອບເຈົ້າໄວ້ກັບຜູ້ຄຸມນັກໂທດ ແລ້ວ
ໃນທີ່ສຸດເຈົ້າຊິຕ້ອງຖືກໂຍນເຂົ້າໄປໃນຄຸກ
5:26 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ພວກເຈົ້າຊິອອກຈາກບ່ອນນັ້ນບໍ່
ໄດ້ ຈົນກວ່າຊິໃຊ້ໜີ້ຄົບ
5:27 ພວກເຈົ້າໄດ້ຍິນ ວ່າ ມີຄຳກ່າວໃນບູຮານວ່າ 'ຢ່າຫລິ້ນຊູ້ຜົວເມຍເຂົາ'
5:28 ແຕ່ເຮົາບອກພວກເຈົ້າວ່າ ຄັນແມ່ນໃຜເບິ່ງແມ່ຍິງເພື່ອໃຫ້ເກີດໃຈກຳໜັດໃນ
ຍິງນັ້ນ ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນຢູ່ແລ້ວ
5:29 ຄັນຕາຂວາຂອງເຈົ້າເປັນອຸປະສັກໃຫ້ຫລົງຜິດ ກໍໃຫ້ຄວັກຖິ້ມ ໂລດ ຍ້ອນວ່າ
ການທີ່ເຈົ້າຊິມີຕາພຽງຂ້າງດຽວຊິເປັນປະໂຫຍດໃຫ້ເຈົ້າ ດີກວ່າມີຕາຄົບທັງສອງ
ຂ້າງແລ້ວຕ້ອງຖືກຖິ້ມລົງໃນນະລົກ

5:30 ແລ້ວຄັນມືຂວາຂອງເຈົ້າເປັນອຸປະສັກໃຫ້ຫລົງຜິດໄປ ກໍໃຫ້ຕັດຖິ້ມ ໂລດ
ຍ້ອນວ່າມັນຊິດີກວ່າສຳລັບເຈົ້າ ຄັນມືຂອງເຈົ້າສູນເສຍໄປຂ້າງດຽວ ແທນທີ່ຊິ
ແລ້ວຕ້ອງຖືກຖິ້ມລົງໃນນະລົກໝົດທັງໂຕ
5:31 ເຄີຍມີຖ້ອຍຄຳວ່າ 'ໃຜກໍຕາມທີ່ຊິປະກັນເມຍ ກໍໃຫ້ເຂົາຍື່ນໃບປະກັນໃຫ້ເມຍ
ເປັນທາງການ'
5:32 ແຕ່ເຮົາບອກພວກເຈົ້າວ່າ ຄັນແມ່ນໃຜຊິປະກັນເມຍ ຍ້ອນອື່ນໆ ນອກຈາກ
ການຫລິ້ນຊູ້ເທົ່ານັ້ນ ກໍຊິເຮັດໃຫ້ນາງລ່ວງປະເວນີຕໍ່ໄປ ກັບໃຜຊິແຕ່ງກັບນາງຜູ້-
ນັ້ນທີ່ຖືກປະກັນໄປແລ້ວ ຜູ້ນັ້ນທີ່ແຕ່ງກັບນາງກໍທໍ່ກັບຫລິ້ນຊູ້ນຳ
5:33 ອີກແນວໜຶ່ງ ພວກເຈົ້າເຄີຍໄດ້ຍິນຖ້ອຍຄຳຈາກຄົນບູຮານວ່າ 'ຢ່າໃຫ້ສາບານ
ຕໍ່ຄົນເປັນຄວາມບໍ່ຈິງ ແຕ່ໃຫ້ຮັກສາສາບານຂອງເຈົ້າໄວ້ຕໍ່ໜ້າອົງພຣະຜູ້ເປັນ-
ເຈົ້າ'
5:34 ແຕ່ເຮົາບອກພວກເຈົ້າອີກວ່າ ຢ່າສາບານຈັກເທື່ອເລີຍ ບໍ່ວ່າຊິອ້າງເຖິງສະ-
ຫວັນກໍດີ ຢ່າເຮັດເລີຍຍ້ອນວ່າສະຫວັນເປັນບັນລັງຂອງພຣະເຈົ້າ
5:35 ບໍ່ວ່າຊິອ້າງເຖິງແຜ່ນດິນໂລກກໍດີ ຢ່າເຮັດເລີຍຍ້ອນວ່າແຜ່ນດິນໂລກເປັນທີ່
ຮອງຕີນຂອງເພິ່ນ ຫລືຊິອ້າງເຖິງເມືອງ ເຢຣູຊາເລັມ ກໍດີ ຢ່າເຮັດເລີຍຍ້ອນວ່າ
ເຢຣູຊາເລັມ ນັ້ນເປັນເມືອງຂອງກະສັດຜູ້ຍິ່ງໃຫຍ່
5:36 ແລ້ວຢ່າສາບານອ້າງເຖິງຫົວຂອງໂຕ ຍ້ອນວ່າຂະໜາດເຈົ້າກໍບໍ່ສາມາດຊິ
ປ່ຽນສີຂອງເສັ້ນຜົມແມ່ນແຕ່ເສັ້ນດຽວບໍ່ວ່າຂາວຫລືດຳ
5:37 ແຕ່ຄັນເຈົ້າຊິເວົ້າວ່າ ແມ່ນ ກໍໃຫ້ວ່າແມ່ນ ຫລືຄັນວ່າ ບໍ່ ກໍໃຫ້ວ່າບໍ່ ເວົ້າແຄ່ນີ້
ກໍດີແລ້ວ ຍ້ອນຄັນເວົ້າເກີນກວ່ານີ້ອີກມັນກໍມາຈາກຄວາມຊົ່ວ
5:38 ພວກເຈົ້າເຄີຍໄດ້ຍິນຖ້ອຍຄຳວ່າ 'ຕາຕໍ່ຕາ ແຂ້ວຕໍ່ແຂ້ວ'
5:39 ແຕ່ເຮົາບອກເຈົ້າວ່າ ຢ່າສູ້ຕໍ່ຕ້ານຄວາມຊົ່ວ ຄືຄັນຜູ້ໃດຕົບແກ້ມຂວາຂອງເຈົ້າ
ກໍໃຫ້ຫັນແກ້ມຊ້າຍໄປໃຫ້ເຂົາຕົບອີກ
5:40 ຄັນຜູ້ໃດຢາກຊິຟ້ອງເຈົ້າຂຶ້ນສານເພື່ອຊິຢຶດເອົາເສື້ອນອກຂອງເຈົ້າ ກໍໃຫ້ເອົາ
ເສື້ອຄຸມມອບໃຫ້ເຂົານຳ

5:41 ແລ້ວຄັນຜູ້ໃດຊິບັງຄັບໃຊ້ເຈົ້າໃຫ້ໄປລະຍະທາງໜຶ່ງກິໂລແມັດ ກໍໃຫ້ໄປນຳ
ເຂົາເຖິງລະຍະທາງສອງເທົ່າ
5:42 ຄັນໃຜຊິຂໍອີຫຍັງນຳເຈົ້າ ກໍຢ່າຫັນໜ້າໜີຈາກຜູ້ນັ້ນ ທີ່ຢາກຂໍຢືມຈາກເຈົ້າ
5:43 ພວກເຈົ້າເຄີຍໄດ້ຍິນຖ້ອຍຄຳວ່າ 'ໃຫ້ຮັກເພື່ອນບ້ານຂອງເຈົ້າ ກັບຊັງສັດຕູ
ຂອງເຈົ້າ'
5:44 ແຕ່ເຮົາບອກເຈົ້າວ່າ ໃຫ້ຮັກສັດຕູຂອງເຈົ້າ ໃຫ້ອວຍພອນຜູ້ທີ່ສາບແຊ່ງເຈົ້າ
ໃຫ້ເຮັດດີກັບຜູ້ທີ່ຊັງເຈົ້າ ກັບໃຫ້ອະທິຖານເວົ້ານຳພຣະເຈົ້າເພື່ອຜູ້ທີ່ໃຊ້ເຈົ້າຢ່າງ
ດູຖູກ ບໍ່ໃຫ້ກຽດກັບດູໝິ່ນຂົ່ມເຫງເຈົ້າ
5:45 ໃຫ້ເຮັດຈັ່ງຊີ້ເພື່ອພວກເຈົ້າຊິເປັນລູກທີ່ດີຂອງພຣະເຈົ້າ ພໍ່ຂອງເຈົ້າຜູ້ເພິ່ນ
ສະຖິດໃນສະຫວັນ ຍ້ອນວ່າພຣະເຈົ້າເພິ່ນໄດ້ໃຫ້ຕະເວັນຂອງເພິ່ນຂຶ້ນມາສ່ອງ
ສະຫວ່າງທັງໃຫ້ຄົນດີຄົນຊົ່ວ *ຢູ່ຄູ່ມື້* ກັບໄດ້ໃຫ້ຝົນຕົກລົງມາໃສ່ຄົນທ່ຽງທຳກັບ
ຄົນອະທຳນຳ
5:46 ຄືຄັນເຈົ້າຮັກແຕ່ຜູ້ທີ່ຮັກເຈົ້າ ເຈົ້າຊິໄດ້ຮັບການຕອບແທນອີຫຍັງເປັນລາງວັນ
ຄືແມ່ນແຕ່ພວກເກັບພາສີກໍເຮັດຈັ່ງຊັ້ນບໍ່ແມ່ນບໍ້
5:47 ແລ້ວຄັນເຈົ້າທັກທາຍກັນແຕ່ພີ່ນ້ອງຂອງໂຕຝ່າຍດຽວ ເຈົ້າໄດ້ເຮັດອີຫຍັງດີ
ຫລາຍກວ່າຄົນອື່ນໆ ແມ່ນແຕ່ພວກເກັບພາສີກໍເຮັດຈັ່ງຊັ້ນຄືກັນບໍ່ແມ່ນບໍ້
5:48 ຈັ່ງຊັ້ນ ໃຫ້ພວກເຈົ້າເປັນຜູ້ດີສົມບູນຄືກັນກັບພຣະເຈົ້າ ຜູ້ເປັນພໍ່ຂອງເຈົ້າຜູ້
ສະຖິດໃນສະຫວັນ ຊຶ່ງເພິ່ນເປັນຜູ້ດີສົມບູນ"

## ມັດທາຍ ບົດທີ 6

6:1 "ລະວັງໃຫ້ດີເດີ້ ພວກເຈົ້າຢ່າເຮັດທານຂອງເຈົ້າຕໍ່ໜ້າຕໍ່ຕາຜູ້ຄົນເພື່ອໃຫ້ເຂົາ
ເຫັນ ບໍ່ຊັ້ນເຈົ້າຊິບໍ່ມີການຕອບແທນອີຫຍັງຈາກພຣະເຈົ້າເປັນລາງວັນ ຜູ້ເປັນພໍ່
ຂອງເຈົ້າຜູ້ເພິ່ນສະຖິດໃນສະຫວັນ
6:2 ຈັ່ງຊັ້ນ ບັດເຈົ້າເຮັດທານຂອງເຈົ້າ ຢ່າເປົ່າແກລ່ວງໜ້າໄວ້ຄືກັນກັບພວກຄົນ
ໜ້າຊື່ໃຈຄົດເຮັດໃນສາລາທຳກັບຕາມຫົນທາງ ເພື່ອຊິເອົາໜ້າເອົາຕາຮັບການ
ຊົມເຊີຍຈາກໝູ່ຄົນ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ພວກເຂົານັ້ນ
ໄດ້ຮັບການຕອບແທນເປັນລາງວັນຂອງເຂົາຢູ່ແລ້ວ

6:3 ແຕ່ພວກເຈົ້ານີ້ ບັດເຮັດທານຂອງເຈົ້າ ຢ່າໃຫ້ມືຊ້າຍຮູ້ຈັກແນວທີ່ມືຂວາໄດ້
ເຮັດເດີ້
6:4 ເພື່ອການເຮັດທານຂອງເຈົ້ານັ້ນຊິຢູ່ໃນທີ່ລັບ ແລ້ວພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ
ຜູ້ສາມາດເຫັນໃນທີ່ລີ້ລັບ ເພິ່ນຊິຕອບແທນເຈົ້າເປັນລາງວັນຢ່າງເປີດເຜີຍ
6:5 ແລ້ວບັດພວກເຈົ້າອະທິຖານເວົ້ານຳພຣະເຈົ້າ ຢ່າເຮັດຄືຄົນໜ້າຊື່ໃຈຄົດ ຍ້ອນ
ເຂົາມັກຢືນອະທິຖານເວົ້ານຳພຣະເຈົ້າໃນສາລາທຳກັບຕາມຫົວມຸມທົນທາງ
ເພື່ອຊິໃຫ້ຜູ້ຄົນເຫັນ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ພວກເຂົານັ້ນ
ໄດ້ຮັບການຕອບແທນເປັນລາງວັນຂອງເຂົາຢູ່ແລ້ວ
6:6 ແຕ່ພວກເຈົ້າ ບັດຊິອະທິຖານເວົ້ານຳພຣະເຈົ້າ ກໍໃຫ້ເຂົ້າຫ້ອງສ່ວນໂຕ ບັດອັດ
ປະຕູແລ້ວ ໃຫ້ອະທິຖານເວົ້ານຳພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ເພິ່ນສະຖິດໃນທີ່
ລີ້ລັບ ແລ້ວພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ຊຶ່ງເຫັນໃນທີ່ລີ້ລັບນັ້ນ ເພິ່ນຊິຕອບແທນ
ເຈົ້າເປັນລາງວັນຢ່າງເປີດເຜີຍ
6:7 ແຕ່ບັດເຈົ້າອະທິຖານເວົ້ານຳພຣະເຈົ້າ ຢ່າໃຊ້ຄຳຊໍ້າຊາກອັນບໍ່ເປັນປະໂຫຍດ
ຄືກັນກັບຄົນຕ່າງຊາດມັກເຮັດ ຍ້ອນເຂົາຄຶດວ່າເວົ້າຫລາຍໆ ຄຳ ພຣະເຈົ້າຈັ່ງຊິ
ຮັບຟັງ
6:8 ຈັ່ງຊັ້ນ ເຈົ້າຢ່າເປັນຄືພວກເຂົາເລີຍ ຍ້ອນວ່າແນວໃດທີ່ເຈົ້າຕ້ອງການນັ້ນ
ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າກໍຮູ້ຈັກກ່ອນເຈົ້າຊິຂໍແລ້ວ
6:9 ກໍໃຫ້ພວກເຈົ້າໃຫ້ອະທິຖານເວົ້ານຳພຣະເຈົ້າແນວນີ້ ວ່າ ຂ້າແຕ່ພຣະເຈົ້າ ຜູ້
ເປັນພໍ່ຂອງຜູ້ຂ້າທັງຫລາຍ ຜູ້ເພິ່ນສະຖິດໃນສະຫວັນ ຂໍໃຫ້ພຣະນາມຂອງພໍ່ເປັນ
ທີ່ເຄົາລົບບູຊາ
6:10 ຂໍໃຫ້ລາຊະອານາຈັກຂອງພໍ່ມາຕັ້ງຢູ່ ຄືຂໍໃຫ້ເປັນໄປຕາມພຣະປະສົງຂອງພໍ່
ຕາມແຜ່ນດິນໂລກ ຄືກັນກັບຢູ່ໃນສະຫວັນ
6:11 ແລ້ວຂໍປະທານເຂົ້າປາອາຫານປະຈຳມື້ໃຫ້ພວກຜູ້ຂ້ານຳ
6:12 ກັບຂໍໃຫ້ອະໄພການລ່ວງລະເມີດຂອງຜູ້ຂ້າ ຄືກັນກັບຜູ້ຂ້າໃຫ້ອະໄພການ
ລ່ວງລະເມີດຂອງຜູ້ອື່ນໆ

6:13 ແລ້ວຂໍຢ່ານຳຜູ້ຂ້າເຂົ້າໄປສູ່ການທົດລອງ ແຕ່ຂໍຊ່ອຍກອບກູ້ຜູ້ຂ້າໃຫ້ພົ້ນຈາກ
ຄວາມຊົ່ວຮ້າຍຕ່າງໆຫາກ ຍ້ອນວ່າລາຊະອານາຈັກກັບລິດເດດກັບສະຫງ່າລາສີ
ເປັນຂອງພໍ່ສືບໆໄປເປັນນິດ ອາເມນ
6:14 ຍ້ອນວ່າຄັນເຈົ້າໃຫ້ອະໄພຄວາມຜິດຂອງຄົນອື່ນ ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ
ຜູ້ຢູ່ໃນສະຫວັນ ເພິ່ນຊິໃຫ້ອະໄພຄວາມຜິດຂອງເຈົ້ານຳ
6:15 ແຕ່ຄັນເຈົ້າບໍ່ຍອມໃຫ້ອະໄພຄວາມຜິດຂອງຄົນອື່ນ ພຣະເຈົ້າຜູ້ເປັນພໍ່ຂອງ
ເຈົ້າ ຜູ້ຢູ່ໃນສະຫວັນ ເພິ່ນຊິບໍ່ຍອມໃຫ້ອະໄພຄວາມຜິດຂອງເຈົ້າຄືກັນ
6:16 ຫລາຍກວ່ານັ້ນອີກ ບັດເຈົ້າຖືການອົດອາຫານ ຢ່າເຮັດໜ້າເສົ້າໝອງຄືຄົນ
ໜ້າຊື່ໃຈຄົດນັ້ນ ຄືພວກເຂົາມັກເຮັດໜ້າຮຸບໜ້າຫ່ຽວ ເພື່ອຊິໃຫ້ຄົນເຫັນວ່າເຂົາ
ພວມຖືສິນອົດອາຫານ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ພວກເຂົາ
ນັ້ນໄດ້ຮັບການຕອບແທນເປັນລາງວັນຂອງເຂົາຢູ່ແລ້ວ
6:17 ແຕ່ຝ່າຍພວກເຈົ້າ ບັດຖືການອົດອາຫານ ໃຫ້ເອົານ້ຳມັນລູບຫົວກັບສ່ວຍໜ້າ
ໄວ້
6:18 ເພື່ອເຈົ້າຊິບໍ່ໃຫ້ຄົນເຫັນວ່າພວມຖືສິນອົດອາຫານ ແຕ່ໃຫ້ເຮັດຕໍ່ໜ້າຕໍ່ຕາ
ພຣະເຈົ້າ ຜູ້ເປັນພໍ່ຂອງເຈົ້າ ຜູ້ສະຖິດໃນທີ່ລີ້ລັບ ແລ້ວພໍ່ຂອງເຈົ້າຜູ້ຊຶ່ງເຫັນໃນທີ່
ລີ້ລັບນັ້ນ ເພິ່ນກໍຊິຕອບແທນເຈົ້າເປັນລາງວັນຢ່າງເປີດເຜີຍ
6:19 ແລ້ວຢ່າສະສົມຊັບສົມບັດໄວ້ໃຫ້ໂຕເອງໃນໂລກນີ້ເດີ້ ແນວທີ່ມອດກັບຂີ້ໝ້ຽງ
ຊິກັດກິນໄດ້ ກັບທີ່ພວກຂີ້ລັກຊິເຈາະເອົາລັກໄປໄດ້
6:20 ແຕ່ໃຫ້ສະສົມຊັບສົມບັດໄວ້ໃຫ້ໂຕເອງໃນສະຫວັນເດີ້ ທີ່ມອດກັບຂີ້ໝ້ຽງຊິບໍ່
ສາມາດກັດກິນໄດ້ ກັບທີ່ພວກຂີ້ລັກຊິບໍ່ສາມາດເຈາະເອົາລັກໄປໄດ້
6:21 ຍ້ອນວ່າຊັບສົມບັດຂອງເຈົ້າຢູ່ໜ້ອງໃດ ໃຈຂອງເຈົ້າຊິຢູ່ໜ້ອງນັ້ນນຳ
6:22 ຕາເປັນຄວາມສະຫວ່າງຂອງຮ່າງກາຍ ຈັ່ງຊັ້ນຄັນຕາຂອງເຈົ້າດີ ໝົດທັງໂຕກໍ
ຊິເຕັມໄປດ້ວຍຄວາມສະຫວ່າງນຳ
6:23 ແຕ່ ຄັນຕາຂອງເຈົ້າຊົ່ວ ທັງໂຕຂອງເຈົ້າກໍຊິເຕັມໄປດ້ວຍຄວາມມືດ ຈັ່ງຊັ້ນ
ຄັນຄວາມສະຫວ່າງໃນໂຕເຈົ້າມືດໄປ ຄວາມມືດນັ້ນຊິໜາທຶບສ່ຳໃດ

6:24 ບໍ່ມີໃຜສາມາດຮັບໃຊ້ນາຍສອງນາຍໄດ້ ຍ້ອນວ່າເຂົາຊິຊັງນາຍຝ່າຍໜຶ່ງກັບ
ຊິຮັກແພງນາຍອີກຝ່າຍໜຶ່ງ ຫລືຊິເຂົ້າຂ້າງນາຍຝ່າຍໜຶ່ງກັບຊິດູໝິ່ນນາຍອີກ
ຝ່າຍໜຶ່ງ ສະຫລຸບແລ້ວເຈົ້າຊິຮັບໃຊ້ພຣະເຈົ້າກັບຮັບໃຊ້ເຂົ້າຂອງເງິນທອງພ້ອມ
ກັນບໍ່ໄດ້ເລີຍ
6:25 ຈັ່ງຊັ້ນ ເຮົາບອກພວກເຈົ້າວ່າ ຢ່າວຸ້ນວາຍເຖິງຊີວິດຂອງໂຕວ່າ ຊິເອົາອີຫຍັງ
ກິນ ຫລືຊິເອົາອີຫຍັງດື່ມ ກັບຢ່າວຸ້ນວາຍເຖິງຮ່າງກາຍຂອງໂຕວ່າ ຊິເອົາອີຫຍັງ
ມານຸ່ງຫົ່ມ ຄືຊີວິດສຳຄັນຫລາຍກວ່າເຂົ້າປາອາຫານບໍ່ແມ່ນບໍ້ ກັບຮ່າງກາຍສຳ-
ຄັນຫລາຍກວ່າເຄື່ອງນຸ່ງຫົ່ມບໍ່ແມ່ນບໍ້
6:26 ໃຫ້ ເບິ່ງນົກໃນອາກາດ ມັນບໍ່ໄດ້ຫວ່ານ ບໍ່ໄດ້ກ່ຽວ ບໍ່ໄດ້ສະສົມໄວ້ໃນເລົ້າ ແຕ່
ພຣະເຈົ້າຜູ້ເປັນພໍ່ຂອງພວກເຈົ້າ ຜູ້ເພິ່ນສະຖິດໃນສະຫວັນ ໄດ້ລ້ຽງນົກໄວ້ຢູ່
ພວກເຈົ້າມີຄຸນຄ່າແຮງຫລາຍກວ່າພວກນົກບໍ່ແມ່ນບໍ້
6:27 ມີໃຜໃນພວກເຈົ້າແໜ່ ອາດ ຕໍ່ຄວາມສູງໂຕເອງຂຶ້ນອີກສອກດຽວໂດຍຄວາມ
ວຸ້ນວາຍໄດ້ບໍ້ *(ບໍ່ມີດອກ)*
6:28 ຄັ່ນຈັ່ງຊັ້ນ ພວກເຈົ້າວຸ້ນວາຍແນວນຸ່ງຫົ່ມຍ້ອນຫຍັງ ໃຫ້ພິຈາລະນາເບິ່ງ
ດອກໄມ້ປ່າອັນຂາວງາມໃນທົ່ງນາ ວ່າມັນງອກງາມຈະເລີນຂຶ້ນໄດ້ຈັ່ງໃດ ມັນບໍ່
ເຮັດງານ ບໍ່ປັ່ນດ້າຍຕຳແຜ່ນເລີຍ
6:29 ແຕ່ເຮົາບອກພວກເຈົ້າວ່າ ຂະໜາດກະສັດ ໂຊໂລໂມນ ບັດແຕ່ງໂຕເຕັມດ້ວຍ
ຄວາມສະຫງ່າຂອງເພິ່ນ ກໍບໍ່ໄດ້ງົດງາມທໍ່ດອກໄມ້ແນວໝູ່ນີ້ຈັກດອກເລີຍ
6:30 ຈັ່ງຊັ້ນ ຄັ່ນພຣະເຈົ້າໄດ້ຕົກແຕ່ງຫຍ້າດອກໄມ້ທີ່ທົ່ງນາໃຫ້ງົດງາມ ຊຶ່ງເປັນຢູ່
ມື້ນີ້ ແຕ່ພໍມື້ອື່ນຊິຖືກຫລົກໂຍນເຂົ້າໄປໃນເຕົາໄຟ ເພິ່ນຊິບໍ່ສາມາດຕົກແຕ່ງເຈົ້າ
ໃຫ້ງາມຫລາຍກວ່າດອກໄມ້ນັ້ນບໍ່ແມ່ນບໍ້ ໂອ້ ຜູ້ມີຄວາມເຊື່ອນ້ອຍເອີຍ
6:31 ຈັ່ງຊັ້ນ ຢ່າວຸ້ນວາຍເລີຍ ວ່າຊິເອົາອີຫຍັງກິນ ຫລືຊິເອົາອີຫຍັງດື່ມ ຫລືຊິເອົາ
ອີຫຍັງນຸ່ງຫົ່ມ
6:32 ຍ້ອນວ່າພວກຄົນຕ່າງຊາດທີ່ບໍ່ຮູ້ຈັກພຣະເຈົ້າກໍຍັງຊອກແຕ່ແນວໝູ່ນີ້ ແຕ່
ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ເພິ່ນສະຖິດໃນສະຫວັນໄດ້ຮູ້ຈັກແລ້ວວ່າ ເຈົ້າຕ້ອງ-
ການແນວໝູ່ນີ້ຢູ່ແລ້ວ

6:33 ແຕ່ໃຫ້ພວກເຈົ້າສະແຫວງຫາລາຊະອານາຈັກຂອງພຣະເຈົ້າ ກັບຄວາມທ່ຽງ-
ທຳຂອງເພິ່ນກ່ອນ ແລ້ວເພິ່ນຊິໄດ້ເພີ່ມເຕີມໝົດຄູ່ອັນຄູ່ແນວໃຫ້ເຈົ້າ
6:34 ຈັ່ງຊັ້ນ ຢ່າຄຶດແຕ່ມື້ອື່ນເລີຍ ຍ້ອນວ່າມື້ອື່ນກໍຊິມີການວຸ້ນວາຍຂອງມັນເອງ
ແຕ່ລະມື້ກໍມີຄວາມຫຍຸ້ງຍາກພໍຢູ່ແລ້ວ”

# ມັດທາຍ ບົດທີ 7

7:1 “ພວກເຈົ້າຢ່າຕັດສິນປະມານຄ່າຜູ້ອື່ນເດີ້ ເພື່ອພວກເຈົ້າຊິບໍ່ຖືກການຕັດສິນ
ປະມານຄ່ານຳ
7:2 ຍ້ອນວ່າເຈົ້າຕັດສິນປະມານຄ່າຜູ້ອື່ນຈັ່ງໃດ ເຈົ້າກໍຊິຖືກການຕັດສິນປະມານ-
ຄ່າຈັ່ງຊັ້ນຄືກັນ ກັບເຈົ້າຊິຕວງອິຫຍັງໃຫ້ເຂົາແບບໃດ ເຈົ້າກໍຊິໄດ້ຮັບການຕວງ
ແບບດຽວກັນນັ້ນຄືນມາ
7:3 ແລ້ວເປັນຫຍັງພວກເຈົ້າຈັ່ງຈ້ອງເບິ່ງຜົງຝຸ່ນທີ່ຢູ່ໃນຕາພີ່ນ້ອງຂອງເຈົ້າ ແຕ່ບໍ່
ພິຈາລະນາເຖິງທ່ອນໄມ້ບັກໃຫຍ່ໃນຕາຂອງໂຕເອງ
7:4 ຫລື ເປັນຫຍັງເຈົ້າຊິບອກພີ່ນ້ອງຂອງເຈົ້າວ່າ ‘ໃຫ້ເຮົາຊ່ອຍເອົາອອກຜົງຝຸ່ນ
ນັ້ນອອກຈາກຕາຂອງເຈົ້າ’ ແຕ່ນີ້ແຫລະ ຄືບໍ່ສົນໃຈທ່ອນໄມ້ຢູ່ໃນຕາຂອງໂຕເອງ
7:5 ໂອເຈົ້າ ຜູ້ໜ້າຊື່ໃຈຄົດເອີຍ ໃຫ້ເອົາທ່ອນໄມ້ອອກຈາກຕາຂອງໂຕເອງກ່ອນ
ແລ້ວເຈົ້າຊິເຫັນໄດ້ຊັດ ສາມາດຊິຊ່ອຍເອົາອອກຜົງຝຸ່ນເມັດນັ້ນອອກຈາກຕາພີ່-
ນ້ອງຂອງເຈົ້າໄດ້
7:6 ຢ່າເອົາແນວທີ່ບໍລິສຸດໂຍນໃຫ້ໝາ ກັບຢ່າໂຍນໄຂ່ມຸກຂອງເຈົ້າໃຫ້ໝູ ຢ້ານວ່າ
ມັນຊິຢຽບຢ່ຳໄປຢ່ຳມາ ແລ້ວຊິຫັນຫລົບມາກັດໂຕເຈົ້ານຳ
7:7 ໃຫ້ຂໍແລ້ວຊິໄດ້ ໃຫ້ຊອກຫາແລ້ວຊິພໍ້ ໃຫ້ເຄາະແລ້ວຊິໄດ້ເປີດໃຫ້ເຈົ້າ
7:8 ຍ້ອນວ່າຄູ່ຄົນທີ່ຂໍກໍຊິໄດ້ຮັບ ຄົນທີ່ຊອກຫາກໍຊິໄດ້ຮັບ ກັບຄົນທີ່ເຄາະກໍຊິເປີດ
ໃຫ້ເຂົາ
7:9 ໃນພວກເຈົ້າມີໃຜແໜ່ທີ່ຊິເອົາກ້ອນຫີນໃຫ້ລູກ ບັດເຂົາຂໍເຂົ້າຈີ່
7:10 ຫລື ເອົາງູໃຫ້ ບັດລູກຂໍປາ

7:11 ຄັນພວກເຈົ້າຜູ້ເປັນຄົນຊາດຊົ່ວ ກໍຍັງຮູ້ຈັກທີ່ຊິໃຫ້ແນວດີໃຫ້ລູກໆ ຂອງໂຕ
ເອງ ແຮງຫລາຍກວ່ານັ້ນ ພຣະເຈົ້າຜູ້ເປັນພໍ່ຂອງພວກເຈົ້າ ຜູ້ເພິ່ນສະຖິດໃນສະ-
ຫວັນ ຊິມອບຂອງດີໃຫ້ກັບຜູ້ທີ່ຂໍຈາກເພິ່ນຫລາຍສໍ່າໃດ
7:12 ຈັ່ງຊັ້ນ ສິ່ງໝົດຄູ່ອັນຄູ່ແນວທີ່ເຈົ້າຢາກໃຫ້ຜູ້ຄົນເຮັດໃຫ້ເຈົ້າ ກໍໃຫ້ເຮັດຈັ່ງຊັ້ນ
ໃຫ້ເຂົາກ່ອນ ຍ້ອນວ່າອັນນີ້ຄືກົດບັນຍັດກັບຄໍາຂອງຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າ
7:13 ໃຫ້ເຂົ້າໄປທາງປະຕູແຄບ ຍ້ອນວ່າປະຕູໃຫຍ່ກັບທາງກວ້າງນັ້ນນໍາໄປເຖິງ
ຄວາມພິນາດ ແລ້ວຄົນທີ່ເຂົ້າໄປທາງນັ້ນມີຫລາຍ
7:14 ຍ້ອນວ່າປະຕູຊຶ່ງນໍາໄປເຖິງຊີວິດນັ້ນກໍຄັບກັບທາງກໍແຄບ ຜູ້ທີ່ຫາພໍ້ກໍມີນ້ອຍ
7:15 ໃຫ້ລະວັງຜູ້ພະຍາກອນບໍ່ຈິງເດີ້ ຜູ້ທີ່ມາຫາເຈົ້າປອມໂຕວ່າເປັນໂຕແກະ ແຕ່
ສ່ວນໃຈຂອງເຂົາໂຫດຫ້ຽມຄືໝາປ່າ
7:16 ເຈົ້າຊິສາມາດຮູ້ຈັກເຂົາ ອ່ານອອກໄດ້ດ້ວຍຜົນງານຂອງເຂົາ ໂລດ ຄືເປັນໄປ
ໄດ້ບໍ້ທີ່ຄົນຊິເດັດເອົາໝາກອະງຸ່ນຈາກເຄືອໜາມ ຫລືວ່າບິດໝາກເດື່ອຈາກກົກ
ໜາມ
7:17 ຈັ່ງໃດກໍຕາມ ກົກໄມ້ດີຄູ່ກົກມັກຊິອອກໝາກອອກຜົນແນວດີ ແຕ່ກົກໄມ້ບໍ່ດີ
ມັກຊິອອກໝາກອອກຜົນແນວບໍ່ດີ
7:18 ຄືວ່າ ກົກໄມ້ອັນດີຊິເກີດຜົນແນວບໍ່ດີກໍເປັນໄປບໍ່ໄດ້ ຫລືກົກໄມ້ອັນບໍ່ດີຊິເກີດ
ຜົນແນວດີກໍເປັນໄປບໍ່ໄດ້ຄືກັນ
7:19 ກົກໄມ້ຄູ່ກົກຊຶ່ງບໍ່ເກີດຜົນດີຊິຕ້ອງຖືກບັກລົງ ແລ້ວກໍໂຍນຖິ້ມໃສ່ໄຟ
7:20 ຈັ່ງຊັ້ນ ເຈົ້າຊິຮູ້ຈັກພວກເຂົາ *ທີ່ເວົ້າມານີ້* ໄດ້ກໍຍ້ອນຜົນງານຂອງເຂົາ
7:21 ບໍ່ແມ່ນຄູ່ຄົນທີ່ຮ້ອງຕໍ່ເຮົາວ່າ 'ທ່ານເຈົ້າຂ້າ ທ່ານເຈົ້າຂ້າ' ຊິໄດ້ເຂົ້າໃນລາຊະ-
ອານາຈັກສະຫວັນ ມີແຕ່ຜູ້ທີ່ເຮັດຕາມຈຸດປະສົງຂອງພຣະເຈົ້າຜູ້ເປັນພໍ່ຂອງເຮົາ
ຜູ້ເພິ່ນສະຖິດໃນສະຫວັນຈັ່ງຊິເຂົ້າໄດ້

7:22 ຄືບັດພໍຮອດມື້ນັ້ນ ຊິມີຄົນຫລາຍຂະໜາດຮ້ອງຕໍ່ເຮົາວ່າ ‘ທ່ານເຈົ້າຂ້າ ທ່ານ-
ເຈົ້າຂ້າ ຜູ້ຂ້າໄດ້ທຳນາຍໃນພຣະນາມຂອງທ່ານ ກັບໄດ້ຂັບໄລ່ຜີອອກໃນພຣະ-
ນາມຂອງທ່ານ ກັບໄດ້ເຮັດການແນວເປັນຕາງຶດຫລາຍຂະໜາດໃນພຣະນາມ
ຂອງທ່ານບໍ່ແມ່ນບໍ້’
7:23 ໃນຍາມນັ້ນເຮົາຊິບອກພວກເຂົາ ໂລດ ວ່າ ‘ເຮົາບໍ່ເຄີຍຮູ້ຈັກເຈົ້າເລີຍ ເຈົ້າຜູ້
ເຮັດຄວາມຊົ່ວຊ້າເລວຊາມ ໃຫ້ໄປເສຍໃຫ້ພົ້ນຈາກໜ້າເຮົາເດີ້’
7:24 ຈັ່ງຊັ້ນຜູ້ໃດທີ່ໄດ້ຍິນພວກຖ້ອຍຄຳຂອງເຮົາ ແລ້ວໄດ້ເຮັດຕາມ ຜູ້ນັ້ນຄືເປັນ
ຄົນມີສະຕິປັນຍາສ້າງເຮືອນຂອງ ໂຕໄວ້ເທິງສິລາ
7:25 ພໍຝົນຕົກມານ້ຳກໍທ່ວມ ລົມກໍພັດແຮງທັ່ງໃສ່ເຮືອນ ແຕ່ເຮືອນນັ້ນບໍ່ໄດ້ພັງລົງ
ຍ້ອນວ່າມີສິລາເປັນຮາກຖານ
7:26 ແຕ່ສ່ວນຜູ້ໃດທີ່ໄດ້ຍິນພວກຖ້ອຍຄຳຂອງເຮົານີ້ ແຕ່ບໍ່ເຮັດຕາມ ເຂົາຄືເປັນ
ຄົນ ໂງ່ ສ້າງເຮືອນຂອງ ໂຕໄວ້ເທິງດິນຊາຍ
7:27 ພໍຝົນຕົກມານ້ຳກໍທ່ວມ ລົມກໍພັດແຮງທັ່ງໃສ່ເຮືອນ ແລ້ວເຮືອນທີ່ສ້າງເທິງ
ຊາຍນັ້ນກໍພັງທະລາຍລົງ ໂລດ ແລ້ວການພັງທະລາຍລົງຂອງເຮືອນນັ້ນກໍໃຫຍ່
ພິເລີກ”
7:28 ຕໍ່ມາບັດພໍ ພຣະເຢຊູ ເວົ້າພວກຖ້ອຍຄຳແນວໝູ່ນີ້ແລ້ວ ພວກຄົນຢູ່ຫັ້ນກໍ
ແປກໃຈເປັນຕາງຶດນຳຄຳສອນຂອງເພິ່ນ
7:29 ຍ້ອນວ່າເພິ່ນໄດ້ສອນເຂົາຢ່າງຄົນມີສິດທິອຳນາດອິຫລີ ບໍ່ຄືພວກນັກທຳນັ້ນ

## ມັດທາຍ ບົດທີ 8

8:1 ບັດ ພຣະເຢຊູ ລົງມາຈາກພູເຂົາແລ້ວ ມີຄົນຫລວງຫລາຍໄດ້ຕິດຕາມເພິ່ນມາ
8:2 ນີ້ແຫລະ ມີຄົນເປັນຂີ້ທູດໄດ້ມາເຄົາລົບບູຊາເພິ່ນແລ້ວເວົ້າວ່າ “ທ່ານເຈົ້າຂ້າ
ພຽງແຕ່ທ່ານຊິກະລຸນາຊື່ໆ ກໍຊິເຮັດໃຫ້ຜູ້ຂ້າໄດ້ສະອາດ ເຊົາດີກັບໝ້ອງໄດ້”
8:3 ພຣະເຢຊູ ເລີຍຍື່ນມືແຕະໃສ່ເຂົາ ເວົ້າວ່າ “ເຮົາພໍໃຈຢູ່ແລ້ວ ໃຫ້ເຈົ້າເຊົາເປັນດີ
ເດີ້” ແລ້ວໃນຍາມນັ້ນພໍດີພະຍາດຂີ້ທູດຂອງ ລາວ ກໍໄດ້ສະອາດກ້ຽງ ເຊົາດີກັບ
ໝ້ອງ

8:4 ສ່ວນ ພຣະເຢຊູ ໄດ້ສັ່ງເຂົາໄວ້ວ່າ “ຢ່າບອກໃຜເລີຍເດີ້ ແຕ່ເອົາໂຕເຈົ້າໄປໃຫ້
ປະໂລຫິດເບິ່ງ ກັບໃຫ້ມອບເຄື່ອງຖວາຍຕາມທີ່ ໂມເຊ ໄດ້ສັ່ງໄວ້ ເພື່ອເປັນຫຼັກ-
ຖານຕໍ່ຄົນທັງຫລາຍວ່າເຈົ້າໄດ້ເຊົາແລ້ວ”
8:5 ແລ້ວບັດ ພຣະເຢຊູ ເຂົ້າໄປໃນເມືອງ ກາເປນາອູມ ມີນາຍຮ້ອຍຄົນໜຶ່ງໄດ້ມາ
ອ້ອນວອນເພິ່ນ
8:6 ເວົ້າວ່າ “ທ່ານເຈົ້າຂ້າ ຜູ້ຮັບໃຊ້ຂອງຜູ້ຂ້າເປັນອຳມະພາດຢູ່ບ້ານ ທົນທຸກເປັນ-
ຕາອີຕົນຫລາຍ”
8:7 ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ “ເຮົາຊິໄປປົວເຂົາໃຫ້ເຊົາ”
8:8 ນາຍຮ້ອຍຜູ້ນັ້ນເວົ້າວ່າ “ທ່ານເຈົ້າຂ້າ ຜູ້ຂ້າບໍ່ສົມຄວນທີ່ຊິໃຫ້ທ່ານເຂົ້າໃຕ້ຫຼັງ-
ຄາຂອງຜູ້ຂ້າເລີຍ ຂໍແຕ່ທ່ານເວົ້າຄຳດຽວເທົ່ານັ້ນ ແລ້ວຄົນໃຊ້ຂອງຜູ້ຂ້າກໍຊິເຊົາ
ເປັນດີກັບໜ້ອງ
8:9 ຄືວ່າ ຜູ້ຂ້າໄດ້ເປັນຄົນຢູ່ໃຕ້ວິໄນທະຫານ ແລ້ວກໍຍັງມີທະຫານຢູ່ໃຕ້ການບັງ-
ຄັບບັນຊາຂອງຜູ້ຂ້າອີກ ຜູ້ຂ້າຊິບອກຄົນນັ້ນຄົນນີ້ວ່າ ‘ໄປ’ ເຂົາກໍໄປ ບອກໃຫ້
‘ມາ’ ເຂົາກໍມາ ບອກວ່າ ‘ໃຫ້ເຮັດແນວນັ້ນແນວນີ້’ ເຂົາກໍຊິເຮັດ”
8:10 ບັດພໍ ພຣະເຢຊູ ໄດ້ຍິນຈັ່ງຊັ້ນກໍປະຫັບໃຈຫລາຍ ເລີຍເວົ້າກັບພວກຄົນທີ່
ຕາມເພິ່ນມາວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ເຮົາບໍ່ເຄີຍພໍ້
ຄວາມເຊື່ອຫລາຍຂະໜາດນີ້ແມ່ນແຕ່ຢູ່ໃນ ອິສະຣາເອນ ເລີຍ
8:11 ແລ້ວເຮົາຊິບອກພວກເຈົ້າວ່າ ຊິມີຄົນຫລວງຫລາຍມາຈາກທາງຕະເວັນອອກ
ກັບທາງຕະເວັນຕົກ ມານັ່ງລົງຮ່ວມກັນກັບເຖົ້າ ອັບຣາຮາມ ກັບ ອີຊາກ ກັບ ຢາ-
ໂຄບ ໃນລາຊະອານາຈັກສະຫວັນ
8:12 ແຕ່ພວກຄົນທີ່ຖືສິດທິວ່າເປັນລູກຂອງລາຊະອານາຈັກຊິຖືກໂຍນຖິ້ມໃນທີ່ມືດ
ອັນເລິກທີ່ສຸດຢູ່ທາງນອກນັ້ນ ໜ້ອງທີ່ມີການຮ້ອງໄຫ້ກັດແຂ້ວຢູ່ຕະຫລອດ”
8:13 ແລ້ວ ພຣະເຢຊູ ຈັ່ງເວົ້າກັບນາຍຮ້ອຍຕໍ່ໄປວ່າ “ໄປຊະເດີ້ ມັນເປັນໄປແລ້ວ
ຕາມຄວາມເຊື່ອຂອງເຈົ້າ” ແລ້ວໃນໂມງນັ້ນພໍດີ ຜູ້ຮັບໃຊ້ຂອງນາຍຮ້ອຍໄດ້ເຊົາ
ເປັນດີກັບໜ້ອງ

8:14 ບັດ ພຣະເຢຊູ ເຂົ້າໄປໃນເຮືອນຂອງ ເປໂຕ ເພິ່ນກໍຫລຽວເບິ່ງເຫັນແມ່ເຖົ້າ
ຂອງ ເປໂຕ ນອນປ່ວຍເປັນໄຂ້ຢູ່
8:15 ແລ້ວເພິ່ນກໍເລີຍເອົາມືເພິ່ນແຕະມືນາງ ແລ້ວພໍດີ ອາການ ປ່ວຍໄຂ້ນັ້ນກໍ
ອອກຈາກນາງໄປ ນາງຈັ່ງລຸກຂຶ້ນຮັບໃຊ້ຄົນທັງຫລາຍຢູ່ຫັ້ນ
8:16 ບັດພໍຄໍ່າລົງ ມີຄົນພາຫລາຍຄົນທີ່ມີຜີຮ້າຍມາຫາ ພຣະເຢຊູ ແລ້ວເພິ່ນໄດ້
ຂັບໄລ່ຜີອອກດ້ວຍຄໍາສັ່ງຂອງເພິ່ນ ກັບໄດ້ປົວພວກຄົນເຈັບປ່ວຍເປັນໄຂ້ໃຫ້ເຂົາ
ເປັນດີ
8:17 ທັງນີ້ເພື່ອຊິໃຫ້ເປັນໄປຕາມຖ້ອຍຄໍາຂອງ ເອຊາຢາ ຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າທີ່ທໍານາຍໄວ້ວ່າ “ເພິ່ນຜູ້ນັ້ນໄດ້ແບກເອົາຄວາມເຈັບໄຂ້ຂອງພວກ
ເຮົາທັງຫລາຍ ກັບໄດ້ຫອບໂລກໄພໄຂ້ເຈັບຂອງເຮົາໄປ”
8:18 ບັດ ພຣະເຢຊູ ຫລຽວເບິ່ງເຫັນຜູ້ຄົນຫລວງຫລາຍຢູ່ຫັ້ນ ຊຶ່ງໄດ້ມາອ້ອມເພິ່ນ
ໄວ້ ເພິ່ນຈັ່ງສັ່ງໃຫ້ຂ້າມນໍ້າໄປຝັ່ງພູ້ນ
8:19 ແລ້ວຍາມນັ້ນ ມີນັກທໍາຄົນໜຶ່ງໄດ້ມາຫາ ພຣະເຢຊູ ແລ້ວຈັ່ງເວົ້າວ່າ “ອາຈານ
ເຈົ້າຂ້າ ອາຈານໄປທາງໃດ ຜູ້ຂ້າກໍຊິຕິດຕາມອາຈານໄປທາງນັ້ນນໍາ”
8:20 ແລ້ວ ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ “ໝາຈິ້ງຈອກຍັງມີຖໍ້າມີຮູ ກັບນົກໃນອາ-
ກາດຍັງມີຮັງ ແຕ່ເຮົາຜູ້ເປັນບຸດມະນຸດບໍ່ມີໝ້ອງທີ່ຊິວາງຫົວເລີຍ”
8:21 ແລ້ວຄົນໜຶ່ງໃນພວກລູກສິດຂອງ ພຣະເຢຊູ ເວົ້າກັບເພິ່ນວ່າ “ທ່ານເຈົ້າຂ້າ
ຂໍອະນຸຍາດໄປຝັງສົບພໍ່ຜູ້ຂ້າກ່ອນແໜ່”
8:22 ແຕ່ ພຣະເຢຊູ ບອກເຂົາວ່າ “ໃຫ້ຕາມເຮົາມາເດີ້ ແລ້ວປ່ອຍໃຫ້ພວກຄົນຢູ່ໃນ
ສະພາບຕາຍຝັງຄົນຕາຍຂອງເຂົາເອງຊະເດີ້”
8:23 ແລ້ວພໍ ພຣະເຢຊູ ຊິລົງເຮືອແລ້ວ ພວກລູກສິດຂອງເພິ່ນກໍໄດ້ລົງເຮືອຕາມ
ເພິ່ນໄປ
8:24 ແລ້ວນີ້ແຫລະ ເກີດມີພາຍຸໃຫຍ່ຂຶ້ນມາໃນທະເລຈົນຄື້ນຊັດທ່ວມເຮືອ ແຕ່
ພຣະເຢຊູ ກໍນອນຫລັບຢ່າງແຈບໃຈຢູ່ *ໃນທ້ອງເຮືອ*
8:25 ແລ້ວພວກລູກສິດຂອງເພິ່ນໄດ້ມາປຸກເພິ່ນ ເວົ້າວ່າ “ທ່ານເຈົ້າຂ້າ ຂໍຊ່ອຍ
ພວກຜູ້ຂ້າແໜ່ທ້ອນ ພວກຜູ້ຂ້າພວມຊິພິນາດຢູ່ແລ້ວ”

8:26 ພຣະເຢຊູ ຈັ່ງເວົ້າກັບພວກເຂົາວ່າ "ເປັນຫຍັງພວກເຈົ້າຈັ່ງຢ້ານ ໂອ້ ເຈົ້າຜູ້ມີ
ຄວາມເຊື່ອນ້ອຍແທ້" ເວົ້າແລ້ວເພິ່ນໄດ້ລຸກຂຶ້ນຫ້າມລົມກັບນ້ຳທະເລ ຄື້ນກັບລົມ
ກໍມິດ ໂລດ ງຽບໄປຮອດທົ່ວທະເລ
8:27 ແລ້ວພວກລູກສິດກໍແປກໃຈເປັນຕາງຶດເວົ້າກັນວ່າ "ຄົນຜູ້ນີ້ເປັນຄົນແບບໃດ
ໜໍ ແມ່ນແຕ່ລົມກັບນ້ຳທະເລກໍຍັງເຊື່ອຟັງ ລາວ "
8:28 ແລ້ວບັດ ພຣະເຢຊູ ຂ້າມຟາກໄປເຖິງແດນກາດາຣາແລ້ວ ມີຄົນສອງຄົນທີ່ຖືກ
ຜີຮ້າຍ ໄດ້ອອກຈາກໜ້ອງອຸບໂມງຝັງສົບມາພໍ້ເພິ່ນ ພວກເຂົາກໍໂຫດຫຼັງມຂະໜ
າດ ຈົນບໍ່ມີໃຜກ້າຍ່າງຜ່ານໄປທາງນັ້ນໄດ້
8:29 ແລ້ວນີ້ແຫລະ ເຂົາກໍຮ້ອງຂຶ້ນວ່າ " ພຣະເຢຊູ ຜູ້ເປັນ ພຣະບຸດ ຂອງພຣະເຈົ້າ
ເອີຍ ພວກເຮົາມີອິຫຍັງກ່ຽວຂ້ອງກັບທ່ານແໜ່ ທ່ານມານີ້ເພື່ອຊິທໍລະມານພວກ
ເຮົາກ່ອນຊິຮອດຍາມສັ່ນບໍ້"
8:30 ແລ້ວມີໝູຝູງໃຫຍ່ພວມຫາກິນຢູ່ທ່າງໆ ຈາກທັ້ນອອກໄປ
8:31 ຜີພວກນັ້ນໄດ້ອ້ອນວອນ ພຣະເຢຊູ ວ່າ "ຄັ່ນທ່ານຂັບພວກເຮົາອອກ ກໍຂໍອະ-
ນຸຍາດໃຫ້ເຂົ້າສິງຢູ່ໃນຝູງໝູນັ້ນທ້ອນ"
8:32 ພຣະເຢຊູ ຈັ່ງເວົ້າກັບຜີພວກນັ້ນວ່າ "ໄປແມະ" ຜີພວກນັ້ນກໍເລີຍອອກໄປເຂົ້າ
ສິງຢູ່ໃນຝູງໝູ ແລ້ວນີ້ແຫລະ ໝູທັງຝູງນັ້ນກໍຕື່ນແລ່ນລົງໄປໂດດໜ້າຜາຊັນໆ ລົງ
ນ້ຳທະເລຈົມນ້ຳຕາຍໝົດ
8:33 ແລ້ວຝ່າຍພວກຄົນລ້ຽງໝູກໍແລ່ນໜີເຂົ້າໄປໃນນະຄອນ ແລ້ວໄດ້ບອກເຖິງ
ເຫດການທີ່ເປັນໄປທັ້ນ ກັບແນວທີ່ເກີດຂຶ້ນກັບຄົນທີ່ເຄີຍມີຜີເຂົ້າສິງຢູ່ທັ້ນ
8:34 ແລ້ວນີ້ແຫລະ ຄົນທັງໝົດໃນນະຄອນນັ້ນໄດ້ພາກັນອອກມາພໍ້ ພຣະເຢຊູ ບັດ
ພໍ້ເພິ່ນແລ້ວ ເຂົາຈັ່ງອ້ອນວອນຂໍໃຫ້ເພິ່ນອອກຈາກເຂດແດນຂອງເຂົາໄປຊະ

## ມັດທາຍ ບົດທີ 9

9:1 ແລ້ວ ພຣະເຢຊູ ກໍລົງເຮືອອີກ ຂ້າມຟາກໄປຍັງເມືອງຂອງເພິ່ນ
9:2 ແລ້ວນີ້ແຫລະ ພວກຄົນຢູ່ທັ້ນໄດ້ຫາມຄົນເປັນອຳມະພາດຜູ້ໜຶ່ງຊຶ່ງນອນເປ-
ຫາມຄົນເຈັບມາຫາ ພຣະເຢຊູ ບັດເພິ່ນຫລຽວເບິ່ງເຫັນຄວາມເຊື່ອຂອງພວກເຂົາ

ຈັ່ງເວົ້າກັບຄົນອຳມະພາດວ່າ “ລູກເອີຍ ໃຫ້ຊື່ນໃຈເດີ້ ບາບຂອງເຈົ້າໄດ້ຮັບການ-
ອະໄພແລ້ວ”
9:3 ແລ້ວນີ້ແຫລະ ມີນັກທຳຜູ້ລາງຄົນຢູ່ຫັ້ນຄຶດໃນໃຈວ່າ “ຄົນນີ້ໄດ້ເວົ້າແນວໝິ່ນ-
ປະມາດ *ພຣະເຈົ້າແລ້ວ* ”
9:4 ສ່ວນ ພຣະເຢຊູ ໄດ້ຮູ້ຈັກແນວຄວາມຄຶດຂອງເຂົາຈັ່ງຖາມວ່າ “ເປັນຫຍັງພວກ
ເຈົ້າຈັ່ງຄຶດຊົ່ວຢູ່ໃນໃຈ
9:5 ແບບໃດຊິງ່າຍກວ່າກັນ ທີ່ຊິວ່າ ‘ບາບຂອງເຈົ້າໄດ້ຮັບການອະໄພແລ້ວ’ ຫລືວ່າ
‘ໃຫ້ລຸກຂຶ້ນຍ່າງໄປເດີ້’ *ບອກມາເບິ່ງ*
9:6 ແຕ່ເພື່ອພວກເຈົ້າຊິໄດ້ຮູ້ວ່າ ເຮົາຜູ້ເປັນບຸດມະນຸດມີສິດທິອຳນາດໃນໂລກທີ່
ຍົກຄວາມຜິດບາບໄດ້” *(ເພິ່ນຈັ່ງເວົ້າສັ່ງຄົນເປັນອຳມະພາດວ່າ)* “ໃຫ້ລຸກຂຶ້ນ
ເອົາເປຫາມຄົນເຈັບເມືອບ້ານຊະເດີ້”
9:7 ແລ້ວຄົນນັ້ນຈັ່ງລຸກຂຶ້ນເມືອບ້ານຂອງໂຕເອງ
9:8 ບັດພໍພວກຄົນຫລວງຫລາຍຢູ່ຫັ້ນໄດ້ເຫັນ ເຂົາກໍແປກໃຈເປັນຕາງຶດ ແລ້ວຈັ່ງ
ພາກັນສັນລະເສີນຍົກຍ້ອງພຣະເຈົ້າ ຜູ້ເພິ່ນໄດ້ມອບສິດທິອຳນາດແນວນັ້ນໃຫ້
ກັບຄົນ
9:9 ແລ້ວບັດພໍ ພຣະເຢຊູ ພວມຜ່ານໜ້ອງນັ້ນໄປ ກໍຫລຽວເບິ່ງເຫັນຜູ້ຊາຍຄົນໜຶ່ງ
ຊື່ ມັດທາຍ ນັ່ງຢູ່ດ່ານເກັບພາສີ ຈັ່ງໄດ້ບອກເຂົາວ່າ “ໃຫ້ຕາມເຮົາມາເດີ້” ແລ້ວ
ເຂົາກໍລຸກຂຶ້ນຕາມເພິ່ນໄປ ໂລດ
9:10 ແລ້ວຕໍ່ມາ ບັດພໍ ພຣະເຢຊູ ນັ່ງລົງຊິກິນເຂົ້າຢູ່ໃນເຮືອນ ນີ້ແຫລະ ມີຄົນເກັບ-
ພາສີກັບຄົນບາບອື່ນໆ ອີກຫລາຍຄົນໄດ້ເຂົ້າມານັ່ງລົງ ຮ່ວມພາເຂົ້າກັບເພິ່ນ
ພ້ອມພວກລູກສິດຂອງເພິ່ນນຳ
9:11 ແລ້ວບັດພໍພວກ ຟາຣີຊາຍ ເຫັນແລ້ວ ເລີຍຖາມພວກລູກສິດຂອງ ພຣະເຢຊູ
ວ່າ “ເປັນຫຍັງອາຈານຂອງພວກເຈົ້າຈັ່ງກິນຮ່ວມກັບຄົນເກັບພາສີກັບຄົນບາບ
*ບອກມາດູ* ”
9:12 ແຕ່ພໍ ພຣະເຢຊູ ໄດ້ຍິນມາ ຈັ່ງເວົ້າກັບພວກ ຟາຣີຊາຍ ນັ້ນວ່າ “ຄົນບໍ່ເປັນ
ຫຍັງບໍ່ຕ້ອງການໝໍດອກ ມີແຕ່ຄົນເຈັບປ່ວຍທີ່ຕ້ອງການໝໍ

9:13 ພວກເຈົ້ານີ້ ໃຫ້ໄປຮຽນຮູ້ຄວາມໝາຍຂອງຖ້ອຍຄຳນີ້ວ່າ ‘ເຮົາປາດຖະໜາ
ຄວາມເມດຕາ ບໍ່ແມ່ນການບູຊາ’ ຄືເຮົາບໍ່ໄດ້ມາເພື່ອຊິເອີ້ນຄົນທ່ຽງທຳ ແຕ່ມາ
ເພື່ອເອີ້ນຄົນບາບໃຫ້ກັບໃຈໃໝ່”
9:14 ແລ້ວພວກລູກສິດຂອງ ໂຢຮັນ ມາຫາຖາມເພິ່ນວ່າ “ເປັນຫຍັງພວກຜູ້ຂ້າກັບ
ພວກ ຟາຣີຊາຍ ຖືການອົດອາຫານຢູ່ເປັນປະຈຳ ແຕ່ພວກລູກສິດຂອງທ່ານບໍ່ໄດ້
ຖືການອົດອາຫານເລີຍ”
9:15 ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ “ໝູ່ເຈົ້າບ່າວຊິພາກັນເປັນທຸກບັດເຈົ້າບ່າວຍັງຢູ່
ກັບເຂົາບໍ້ ແຕ່ມີມື້ທີ່ຊິມາເຖິງທີ່ເຈົ້າບ່າວຊິຕ້ອງອອກຈາກເຂົາໄປ ແລ້ວໃນຍາມ
ນັ້ນເຂົາຊິຖືການອົດອາຫານຢູ່
9:16 ຄືຊິບໍ່ມີໃຜເຄີຍເອົາທ່ອນຜ້າທີ່ສານໃໝ່ມາຕາບເສື້ອເກົ່າດອກ ຍ້ອນວ່າພໍ
ຕາບເສື້ອເກົ່າແລ້ວ ຜ້າໃໝ່ນັ້ນຊິຫົດໃຫ້ຢູ່ໂຕ ຈັ່ງຊິເຮັດໃຫ້ເສື້ອເກົ່າຂາດອອກໄປ
ຫລາຍກວ່າເກົ່າອີກ
9:17 ກັບວ່າ ບໍ່ມີໃຜເຄີຍເອົາເຫລົ້າອະງຸ່ນໃໝ່ເອົາໃສ່ໄວ້ໃນຖົງໜັງເກົ່າ ຄັ່ນເຮັດ
ຈັ່ງຊັ້ນຖົງໜັງເກົ່າຊິຂາດຊິແຕກໄປ ແລ້ວເຫລົ້າອະງຸ່ນໃໝ່ນັ້ນຊິໄຫລອອກມາເຮ່ຍ
ໝົດ ແລ້ວຖົງໜັງເກົ່າກໍຊິເສຍໄປນຳ ແຕ່ວ່າຄົນມັກຊິເອົາເຫລົ້າອະງຸ່ນໃໝ່ໃສ່ໄວ້
ໃນຖົງໜັງໃໝ່ ແລ້ວທັງສອງກໍຊິບໍ່ເປັນຫຍັງ ຢູ່ນຳກັນໄດ້ເລີຍ”
9:18 ບັດ ພຣະເຢຊູ ພວມເວົ້າຄຳແນວພວກນີ້ ນີ້ແຫລະ ມີຜູ້ປົກຄອງຄົນໜຶ່ງມາ
ເຄົາລົບບູຊາເພິ່ນ ໄດ້ເວົ້າວ່າ “ລູກສາວຂອງຜູ້ຂ້າຫາກໍຕາຍ ຂໍທ່ານໄປວາງມືເທິງ
ໂຕເຂົາແໜ່ທ້ອນ ແລ້ວລູກຜູ້ຂ້າກໍຊິມີຊີວິດຕໍ່ອີກ”
9:19 ສ່ວນ ພຣະເຢຊູ ຈັ່ງໄດ້ລຸກຂຶ້ນຕາມຜູ້ປົກຄອງຄົນນັ້ນໄປ ແລ້ວພວກລູກສິດ
ຂອງເພິ່ນກໍຕາມໄປນຳ
9:20 ແລ້ວນີ້ແຫລະ *ພວມໄປຢູ່ຫັ້ນ* ມີແມ່ຍິງຄົນໜຶ່ງເປັນພະຍາດຕົກເລືອດໄດ້ສິບ
ສອງປີມາແລ້ວ ໄດ້ແອບເຂົ້າໄປທາງຫລັງ ພຣະເຢຊູ ແລ້ວໄດ້ແຕະຕ້ອງຜູ້ຊາຍ
ເສື້ອຄຸມເພິ່ນ
9:21 ຄືນາງໄດ້ຄຶດໃນໃຈວ່າ “ຄັ່ນເຮົາໄດ້ເອົາມືພຽງແຕ່ແຕະໃສ່ເສື້ອຄຸມເພິ່ນ ເຮົາກໍ
ຊິເຊົາເປັນດີ”

9:22 ສ່ວນ ພຣະເຢຊູ ໄດ້ຫລຽວຫລັງເຫັນນາງຈັ່ງເວົ້າວ່າ “ລູກສາວເອີຍ ໃຫ້ຊື່ນໃຈ
ຊະເດີ້ ຍ້ອນຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າເຊົາເປັນດີແລ້ວ” ນັບຕັ້ງແຕ່ຍາມ
ນັ້ນມາ ແມ່ຍິງນັ້ນກໍເຊົາເປັນດີເລີຍ
9:23 ແລ້ວບັດພໍ ພຣະເຢຊູ ໄປຮອດ ກໍໄດ້ເຂົ້າໄປໃນເຮືອນຜູ້ປົກຄອງນັ້ນ ໄດ້ຫລຽວ
ເຫັນພວກເປົ່າປີ່ກັບໝູ່ຄົນຫລາຍໆ ພວມສົ່ງສຽງວຸ້ນວາຍກັນຢູ່
9:24 ພຣະເຢຊູ ຈັ່ງເວົ້າກັບພວກເຂົາວ່າ “ໃຫ້ຖອຍອອກໄປຊະ ຄືວ່າເດັກຍິງຄົນນີ້
ຍັງບໍ່ທັນຕາຍດອກ ເປັນແຕ່ນອນຫລັບຢູ່ຊື່ໆ” ເວົ້າແລ້ວພວກເຂົາກໍພາກັນຫົວ-
ຂວັນເພິ່ນ
9:25 ແຕ່ບັດຊວນໝູ່ຄົນໃຫ້ອອກໄປແລ້ວ ພຣະເຢຊູ ໄດ້ເຂົ້າໄປຈັບມືເດັກຍິງ ແລ້ວ
ເດັກຍິງນັ້ນກໍລຸກຂຶ້ນ
9:26 ແລ້ວຊື່ສຽງເລື່ອງນີ້ກໍເລື່ອງລືໄປຮອດທົ່ວແຄວ້ນນັ້ນ
9:27 ແລ້ວບັດ ພຣະເຢຊູ ໄດ້ອອກຈາກຫັ້ນໄປ ກໍມີຜູ້ຊາຍຕາບອດສອງຄົນຕາມ
ພຣະເຢຊູ ມາຮ້ອງວ່າ “ລູກ ດາວິດ ເຈົ້າຂ້າ ຂໍເມດຕາພວກຜູ້ຂ້າທ້ອນ”
9:28 ແລ້ວບັດ ພຣະເຢຊູ ໄດ້ເຂົ້າໄປໃນເຮືອນ ຜູ້ຊາຍຕາບອດທັງສອງກໍຕາມມາ
ຫາເພິ່ນ ແລ້ວ ພຣະເຢຊູ ເລີຍຖາມເຂົາວ່າ “ພວກເຈົ້າເຊື່ອບໍ້ວ່າ ເຮົາສາມາດຊິ
ເຮັດການນີ້ໄດ້” ເຂົາຈັ່ງຕອບເພິ່ນວ່າ “ເຊື່ອ ທ່ານເຈົ້າຂ້າ”
9:29 ເພິ່ນກໍເລີຍເອົາມືແຕະໃສ່ຕາຂອງເຂົາທັງສອງເວົ້າວ່າ “ໃຫ້ເປັນໄປຕາມ
ຄວາມເຊື່ອຂອງພວກເຈົ້າເດີ້”
9:30 ແລ້ວຕາຂອງພວກເຂົາກໍຖືກມືນອອກມາເຫັນຮຸ່ງໄດ້ເລີຍ ພຣະເຢຊູ ຈັ່ງບອກ
ເຂົາໄວ້ວ່າ “ຢ່າໃຫ້ຜູ້ໃດຮູ້ຈັກເລີຍ”
9:31 ແຕ່ບັດເຂົາອອກຈາກຫັ້ນໄປແລ້ວ ກໍເຜີຍແຜ່ຊື່ສຽງຂອງ ພຣະເຢຊູ ໄປຮອດ
ທົ່ວແຄວ້ນນັ້ນ
9:32 ບັດ ພຣະເຢຊູ ກັບພວກລູກສິດພວມອອກຈາກໜ້ອງນັ້ນໄປ ນີ້ແຫລະ ມີຜູ້ລາງ
ຄົນໄດ້ພາຄົນໃບ້ຜູ້ໜຶ່ງທີ່ຖືກຜີເຂົ້າມາຫາເພິ່ນ
9:33 ບັດເພິ່ນຂັບໄລ່ຜີອອກແລ້ວ ຄົນໃບ້ນັ້ນກໍເວົ້າໄດ້ ໝູ່ຄົນກໍແປກໃຈເປັນຕາງຶດ
ເວົ້າກັນວ່າ “ບໍ່ເຄີຍເຫັນການເຮັດແນວນີ້ຈັກເທື່ອໃນ ອິສະຣາເອນ ເລີຍ”

9:34 ແຕ່ພວກ ຟາຣີຊາຍ ຫາວ່າ "ຄົນນີ້ຂັບໄລ່ຜີອອກດ້ວຍອຳນາດຂອງນາຍຜີ"
9:35 ແລ້ວ ພຣະເຢຊູ ໄດ້ເດີນທາງໄປລ້ອມຮອບຕາມບ້ານຕາມເມືອງ ສອນໃນສາ-
ລາທຳຂອງເຂົາ ກັບປະກາດຂ່າວດີອັນປະເສີດເລື່ອງລາຊະອານາຈັກຂອງພຣະ-
ເຈົ້ານັ້ນ ກັບໄດ້ປົວໂລກໄພໄຂ້ເຈັບໝົດຄູ່ແນວຂອງໄທບ້ານໄທເມືອງໃຫ້ເຊົາເປັນ
ດີ
9:36 ແລ້ວບັດ ພຣະເຢຊູ ຫລຽວເຫັນພວກຄົນຫລວງຫລາຍຢູ່ຫັ້ນ ເພິ່ນກໍອີຕົນເຂົາ
ວ່າເຂົາອ່ອນເພຍເມື່ອຍຫລາຍ ກັບຖືກກະຈັກກະຈາຍໄປຄືກັນກັບຝູງແກະບໍ່ມີຜູ້
ລ້ຽງເບິ່ງແຍງ
9:37 ແລ້ວ ພຣະເຢຊູ ຈັ່ງເວົ້າກັບພວກລູກສິດຂອງເພິ່ນວ່າ "ວຽກການເກັບກ່ຽວນັ້ນ
ມີຫລາຍຂະໜາດ ແຕ່ຄົນງານຍັງບໍ່ພໍເລີຍ
9:38 ຈັ່ງຊັ້ນ ໃຫ້ພວກເຈົ້າອ້ອນວອນເຈົ້າຂອງງານເກັບກ່ຽວນັ້ນ ໃຫ້ສົ່ງຄົນງານມາ
ຊ່ອຍໃນການເກັບກ່ຽວຂອງເພິ່ນນຳ"

## ມັດທາຍ ບົດທີ 10

10:1 ແລ້ວບັດ ພຣະເຢຊູ ໄດ້ເອີ້ນລູກສິດສິບສອງຄົນຂອງເພິ່ນມາແລ້ວ ເພິ່ນກໍ
ມອບອຳນາດໃຫ້ເຂົາຂັບໄລ່ຜີໂສໂຄກອອກໄດ້ ກັບໃຫ້ປົວໂລກໄພໄຂ້ເຈັບໝົດຄູ່
ແນວໃຫ້ເຊົາດີໄດ້
10:2 ບັດນີ້ຊື່ຂອງທູດພິເສດສິບສອງຄົນນັ້ນມີຈັ່ງຊີ້ ຄົນທຳອິດຊື່ ຊີໂມນ ທີ່ເອີ້ນວ່າ
ເປໂຕ ກັບ ອັນເດອາ ນ້ອງຊາຍຂອງ ເປໂຕ ຢາໂກໂບ ລູກຊາຍ ເຊເບດາຍ ກັບ
ໂຢຮັນ ນ້ອງຊາຍຂອງ ຢາໂກໂບ
10:3 ຟີລິບ ກັບ ບາຣະໂທໂລມາຍ ໂທມາ ກັບ ມັດທາຍ ຄົນເກັບພາສີນັ້ນ ຢາ-
ໂກໂບ ລູກຊາຍຂອງ ອາລະຟາຍ ກັບ ເລບເບອັດ ຜູ້ທີ່ມີຊື່ອີກວ່າ ທັດເດອັດ
10:4 ຊີໂມນ ຊາວ ການາອານ ກັບ ຢູດາ ອິດສະກາຣິອົດ ແມ່ນຜູ້ນີ້ທີ່ໄດ້ທໍລະຍົດ
ພຣະເຢຊູ
10:5 ສິບສອງຄົນນີ້ ພຣະເຢຊູ ໄດ້ໃຊ້ໃຫ້ອອກໄປກັບສັ່ງເຂົາວ່າ "ຢ່າໄປຫາພວກ
ຕ່າງຊາດ ກັບຢ່າເຂົ້າໄປໃນເມືອງຂອງຊາວ ຊາມາເຣຍ
10:6 ແຕ່ໃຫ້ໄປຫາຝູງແກະທີ່ຫລົງທາງໄປຫັ້ນ ຄືພີ່ນ້ອງຊາວ ອິສະຣາເອນ ເດີ້

10:7 ແລ້ວບັດພວມໄປຢູ່ຫັ້ນ ກໍໃຫ້ປະກາດວ່າ 'ລາຊະອານາຈັກສະຫວັນໃກ້ຊິມາ
ຮອດແລ້ວ'
10:8 ໃຫ້ປົວຄົນເຈັບໄຂ້ໄດ້ປ່ວຍໃຫ້ເຊົາ ຄົນພະຍາດຂີ້ທູດໃຫ້ເຊົາ ສະອາດດີຄືເກົ່າ
ຄົນຕາຍແລ້ວໃຫ້ເປັນຂຶ້ນມາອີກ ກັບໃຫ້ຂັບໄລ່ຜີອອກ ພວກເຈົ້າໄດ້ຮັບ *ຄວາມ
ຊ່ອຍເຫລືອ* ໂດຍບໍ່ຕ້ອງເສຍຄ່າອີຫຍັງ ຈັ່ງໃຫ້ *ຊ່ອຍຄົນອື່ນ* ໂດຍບໍ່ຄິດຄ່າຄືກັນ
10:9 ບໍ່ໃຫ້ເອົາທອງຄໍາ ຫລືເງິນ ຫລືທອງແດງໃສ່ເຂັມຄັດຂອງເຈົ້າໄວ້
10:10 ກັບບໍ່ໃຫ້ເອົາຍ່າມໄປນໍາຕາມທາງ ຫລືເສື້ອຄຸມສອງໂຕ ຫລືເກີບ ຫລືໄມ້ເທົ້າ
ຍ້ອນວ່າຄົນງານສົມຄວນທີ່ຊິໄດ້ຮັບແນວກິນ
10:11 ບັດພວກເຈົ້າມາເຖິງບ້ານໃດເມືອງໃດ ກໍໃຫ້ຄອຍຖ້າເບິ່ງວ່າໃຜເປັນຄົນເໝ
າະດີໃນໝ້ອງນັ້ນ ແລ້ວໃຫ້ໄປອາໄສກັບຜູ້ນັ້ນຈົນກວ່າຊິຈາກໄປ
10:12 ແລ້ວບັດຍາມພວກເຈົ້າຂຶ້ນເຮືອນໃດ ກໍໃຫ້ກ່າວພົນໃຫ້ເຮືອນນັ້ນ
10:13 ແລ້ວຄັ່ນແມ່ນເຮືອນໃດເໝາະດີທີ່ຊິຮັບພົນ ກໍໃຫ້ສັນຕິສຸກຂອງເຈົ້າສະຖິດຢູ່
ກັບເຮືອນນັ້ນ ແຕ່ຄັ່ນເຮືອນໃດບໍ່ເໝາະດີທີ່ຊິຮັບພົນ ກໍໃຫ້ສັນຕິສຸກຂອງເຈົ້າກັບ
ຄືນມາຢູ່ກັບເຈົ້າ
10:14 ແລ້ວຄັ່ນຜູ້ໃດບໍ່ຕ້ອນຮັບພວກເຈົ້າ ກັບບໍ່ຟັງຄໍາຂອງເຈົ້າ ບັດຊິອອກຈາກ
ເຮືອນນັ້ນເມືອງນັ້ນ ກໍໃຫ້ປັດຝຸ່ນຂອງເມືອງນັ້ນທີ່ຕິດເກີບເຈົ້າອອກຊະເດີ້
10:15 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ໃນມື້ພິພາກສາທີ່ຊິມານັ້ນ ໂທດ
ທີ່ຊິລົງໃສ່ເມືອງ ໂສໂດມ ກັບເມືອງ ໂກໂມຣາ ຊິເບົາກວ່າໂທດຂອງເມືອງນັ້ນ *(ທີ່
ບໍ່ຕ້ອນຮັບເຈົ້າ)*
10:16 ນີ້ແຫລະ ເຮົາໃຊ້ພວກເຈົ້າອອກໄປຄືກັນກັບແກະຢູ່ໃນຝູງໝາປ່າ ຈັ່ງຊັ້ນໃຫ້
ພວກເຈົ້າສະຫລາດຄືງູ ກັບອ່ອນສຸພາບຄືນົກເຂົາ
10:17 ແຕ່ໃຫ້ລະວັງພວກຜູ້ຄົນໄວ້ໃຫ້ດີເດີ້ ຍ້ອນວ່າພວກເຂົາຊິມອບພວກເຈົ້າໄວ້
ກັບສານສະພາ ແຊນເຮດຣິນ ແລ້ວພວກເຂົາຊິຂ້ຽນຊິຕີພວກເຈົ້າໃນສາລາທໍາ
ຂອງເຂົາ

10:18 ກັບພວກເຈົ້າຊິຖືກລາກໄປຢູ່ຕໍ່ໜ້າພວກເຈົ້າເມືອງກັບພວກກະສັດ ຍ້ອນເຈົ້າ
ເຫັນແກ່ເຮົາ ນີ້ກໍເພື່ອພວກເຈົ້າຊິໄດ້ເປັນພະຍານຕໍ່ເຂົາ ກັບຕໍ່ຄົນຕ່າງຊາດເຖິງ
ເຮົານຳ
10:19 ແຕ່ບັດເຂົາມອບເຈົ້າໄວ້ນັ້ນ ຢ່າສູ່ຄຶດຫລາຍເດີ້ ວ່າຊິເວົ້າອີຫຍັງຫລືຈັ່ງໃດ
ຍ້ອນບັດເຖິງຍາມນັ້ນແລ້ວ ຄຳທີ່ເຈົ້າຊິຕ້ອງເວົ້າ *ພຣະເຈົ້າ* ກໍຊິໃຫ້ເຈົ້າ ໂລດ
10:20 ຍ້ອນວ່າຜູ້ທີ່ຊິເວົ້ານັ້ນ ກໍບໍ່ແມ່ນໂຕເຈົ້າເອງ ແຕ່ເປັນ ພຣະວິນຍານ ຂອງ
ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າຕ່າງຫາກ ເພິ່ນຊິເປັນຜູ້ບອກຄວາມໄວ້ໃນໃຈຂອງເຈົ້າ
10:21 ແລ້ວອ້າຍກໍຊິມອບນ້ອງໄວ້ໃຫ້ຖືກປະຫານ ພໍ່ຊິມອບລູກ ກັບລູກກໍຊິທໍລະຍົດ
ຕໍ່ພໍ່ແມ່ໃຫ້ຖືກປະຫານຄືກັນ
10:22 ແລ້ວໝົດຄູ່ຄົນກໍຊິຊັງເຈົ້າຍ້ອນເຈົ້າເຫັນແກ່ນາມຂອງເຮົາ ແຕ່ຜູ້ທີ່ທົນໄດ້
ເຖິງສຸດທ້າຍ ຜູ້ນັ້ນກໍຊິພົ້ນ
10:23 ແຕ່ບັດເຂົາຂົ່ມເຫງເຈົ້າໃນເມືອງນັ້ນເມືອງນີ້ ກໍໃຫ້ໜີໄປຢູ່ອີກເມືອງໜຶ່ງ ເຮົາ
ຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ກ່ອນທີ່ເຈົ້າຊິໄປຮອດທົ່ວຄູ່ເມືອງໃນ ອິ-
ສະຣາເອນ ເຮົາຜູ້ເປັນບຸດມະນຸດນັ້ນຊິມາ
10:24 ຄືລູກສິດຊິບໍ່ໃຫຍ່ກວ່າຄູ ກັບຂ້າທາດຊິບໍ່ໃຫຍ່ກວ່ານາຍ
10:25 ຄືຄັ່ນລູກສິດຊິທໍ່ຄູຂອງເຂົາ ກັບຄົນໃຊ້ຊິທໍ່ນາຍກໍຊິດີ ແລ້ວຄັ່ນຄົນຊິເອີ້ນໃສ່
ເຈົ້າຂອງເຮືອນວ່າເປັນ ເບເອນເຊບູນ ເຂົາກໍຊິເອີ້ນໃສ່ໄທເຮືອນວ່າເປັນ ພະຍາ-
ມານ ຄືກັນແຮງຫລາຍສ່ຳໃດ
10:26 ຈັ່ງຊັ້ນຢ່າສູ່ຢ້ານເຂົາເດີ້ ຍ້ອນວ່າບໍ່ມີແນວໃດປິດບັງໄວ້ທີ່ຊິບໍ່ຖືກເປີດເຜີຍ
ຫລືເຊື່ອງໄວ້ທີ່ຊິບໍ່ນຳອອກມາໃຫ້ຮູ້ເຫັນ
10:27 ຄືແນວທີ່ເຮົາບອກພວກເຈົ້າໃນທີ່ມືດ ກໍໃຫ້ອອກໄປເວົ້າໃນທີ່ແຈ້ງເດີ້ ກັບ
ແນວທີ່ເຈົ້າໄດ້ຍິນເຂົ້າຫູຄ່ອຍໆ ກໍໃຫ້ປະກາດຈາກຫຼັງຄາເຮືອນນຳເດີ້
10:28 ກັບຢ່າສູ່ຢ້ານຜູ້ທີ່ສາມາດຂ້າພຽງແຕ່ກາຍ ແຕ່ບໍ່ສາມາດທີ່ຊິຂ້າຈິດວິນຍານ
ນຳ ແຕ່ວ່າໃຫ້ຢ້ານຜູ້ເພິ່ນມີລິດອຳນາດທີ່ຊິເຮັດຮ້າຍທັງຈິດວິນຍານທັງກາຍໃຫ້
ພິນາດໃນນະລົກໄດ້

10:29 ຄືນົກຈອກສອງໂຕຂາຍແຄ່ກີບດຽວບໍ່ແມ່ນບໍ້ ແລ້ວແມ່ນແຕ່ໂຕດຽວຊິຕົກດິນ
ກໍບໍ່ໄດ້ນອກຈາກພຣະເຈົ້າຜູ້ເປັນພໍ່ຂອງເຈົ້າເພິ່ນກໍຮູ້ ໂລດ
10:30 ແລ້ວແມ່ນແຕ່ເສັ້ນຜົມຂອງພວກເຈົ້າ ເພິ່ນກໍນັບໄວ້ແລ້ວໝົດຄູ່ເສັ້ນ
10:31 ຈັ່ງຊັ້ນຢ່າສູ່ຢ້ານອີຫຍັງເລີຍ ພວກເຈົ້າມີຄຸນຄ່າຫລາຍກວ່ານົກຈອກຫລາຍ
ໂຕບໍ່ແມ່ນບໍ້
10:32 ຈັ່ງຊັ້ນ ຜູ້ໃດກໍຕາມທີ່ຊິຮັບປາກວ່າຮູ້ຈັກເຮົາຕໍ່ໜ້າຜູ້ຄົນ ເຮົາກໍຊິຮັບຜູ້ນັ້ນຕໍ່
ໜ້າພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຜູ້ເພິ່ນສະຖິດໃນສະຫວັນນຳ
10:33 ແຕ່ຜູ້ໃດທີ່ຊິປະຕິເສດເຮົາຕໍ່ໜ້າຜູ້ຄົນ ເຮົາຊິປະຕິເສດຜູ້ນັ້ນຕໍ່ໜ້າພຣະເຈົ້າຜູ້
ເປັນພໍ່ຂອງເຮົາ ຜູ້ເພິ່ນສະຖິດໃນສະຫວັນຄືກັນ
10:34 ຢ່າສູ່ຄຶດວ່າເຮົາມາເພື່ອຊິນຳສັນຕິພາບມາສູ່ໂລກ ເຮົາບໍ່ໄດ້ນຳສັນຕິພາບ
ມາດອກ ແຕ່ໄດ້ນຳດາບມາຕ່າງຫາກ
10:35 ຄືເຮົາມາເພື່ອຊິໃຫ້ລູກຊາຍຜິດໃຈກັນກັບພໍ່ຂອງໂຕ ກັບລູກສາວຜິດໃຈກັນ-
ກັບແມ່ ກັບລູກໃພ້ຜິດໃຈກັນກັບແມ່ຜົວ
10:36 ຄືຄົນເຮືອນດຽວກັນ ກໍຊິຂັດໃຈເປັນສັດຕູກັນແລະກັນ
10:37 ຜູ້ໃດທີ່ຮັກພໍ່ແມ່ຫລາຍກວ່າຮັກເຮົາ ຜູ້ນັ້ນບໍ່ສົມຄວນທີ່ຊິໄປກັບເຮົາ ກັບຜູ້ໃດ
ຮັກລູກຊາຍຍິງຫລາຍກວ່າຮັກເຮົາ ຜູ້ນັ້ນບໍ່ສົມຄວນທີ່ຊິໄປກັບເຮົາ
10:38 ກັບຜູ້ໃດທີ່ບໍ່ຮັບເອົາໄມ້ກາງແຂນຂອງໂຕແລ້ວຕາມເຮົາໄປ ຜູ້ນັ້ນບໍ່ສົມຄວນ
ທີ່ຊິໄປກັບເຮົາຄືກັນ
10:39 ຄືວ່າ ຜູ້ໃດຄຶດຢາກເອົາຊີວິດລອດ ຜູ້ນັ້ນຊິເສຍຊີວິດໄປ ແຕ່ຜູ້ໃດທີ່ອຸທິດຊີ-
ວິດຂອງໂຕຍ້ອນເຫັນແກ່ເຮົາ ຜູ້ນັ້ນກໍຊິໄດ້ຊີວິດລອດ
10:40 ແລ້ວຜູ້ທີ່ຕ້ອນຮັບພວກເຈົ້າກໍທໍ່ກັບຕ້ອນຮັບເຮົາ ແລ້ວຜູ້ທີ່ຕ້ອນຮັບເຮົາ ກໍທໍ່-
ກັບຕ້ອນຮັບຜູ້ເພິ່ນທີ່ໃຊ້ເຮົາມາ
10:41 ແລ້ວຜູ້ທີ່ຕ້ອນຮັບຜູ້ເປັນປາກເປັນສຽງຂອງພຣະເຈົ້າ ຍ້ອນວ່າເປັນຜູ້ເປັນ-
ປາກເປັນສຽງ ກໍຊິໄດ້ບຳເໜັດລາງວັນຢ່າງຜູ້ເປັນປາກເປັນສຽງນັ້ນນຳ ແລ້ວຜູ້ທີ່
ຕ້ອນຮັບຜູ້ທ່ຽງທຳ ຍ້ອນວ່າເປັນຜູ້ທ່ຽງທຳ ກໍຊິໄດ້ບຳເໜັດລາງວັນຢ່າງຜູ້ທ່ຽງທຳ
ນັ້ນນຳ

10:42 ແລ້ວຜູ້ໃດຊິເອົານ້ຳເຢັນໃຫ້ຜູ້ນ້ອຍໆສ່ຳນີ້ໃຫ້ກິນ ໂດຍໃນນາມຂອງລູກສິດ
ຂອງເຮົາ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ຜູ້ນັ້ນຊິບໍ່ໄດ້ຂາດບຳເໜັດ
ລາງວັນຈັກໜ່ອຍເລີຍ”

## ມັດທາຍ ບົດທີ 11

11:1 ຕໍ່ມາ ບັດ ພຣະເຢຊູ ເວົ້າສັ່ງລູກສິດສິບສອງຄົນຂອງເພິ່ນໄວ້ແລ້ວ ເພິ່ນກໍ
ອອກຈາກໜ້ອງນັ້ນ ໄປບອກໄປສອນກັບປະກາດໃນບ້ານໃນເມືອງຕ່າງໆ ຂອງ
ຄົນຢູ່ຫັ້ນ
11:2 ບັດນີ້ ໂຢຮັນ ຜູ້ທີ່ໃຫ້ຄົນຮັບຈຸ່ມນ້ຳນັ້ນ ກໍຢູ່ໃນຄຸກ ໄດ້ຍິນເຖິງ ກິດຈະການ
ຂອງ ພຣະຄຣິດ ຈັ່ງໄດ້ໃຊ້ລູກສິດສອງຄົນຂອງ ລາວ ໄປຫາ
11:3 ແລ້ວເຂົາຖາມ ພຣະເຢຊູ ວ່າ “ທ່ານເປັນຜູ້ທີ່ຊິມານັ້ນບໍ້ ຫລືເຮົາຊິຕ້ອງຄອຍ-
ຖ້າຫາຜູ້ອື່ນ”
11:4 ພຣະເຢຊູ ຈັ່ງຕອບພວກເຂົາວ່າ “ໃຫ້ໄປບອກ ໂຢຮັນ ອີກເຖິງແນວທີ່ພວກ
ເຈົ້າໄດ້ຍິນໄດ້ເຫັນ
11:5 ຄືວ່າ ຄົນຕາບອດກໍຫາຍບອດເຫັນຮຸ່ງໄດ້ແລ້ວ ຄົນເປ້ຍກໍຍ່າງໄດ້ແລ້ວ ຄົນ
ເປັນຂີ້ທູດກໍສະອາດກ້ຽງໝົດເປັນດີແລ້ວ ຄົນຫູໜວກກໍໄດ້ຍິນແລ້ວ ຄົນທີ່ຕາຍໄປ
ກໍເປັນຂຶ້ນມາແລ້ວ ກັບຂ່າວດີອັນປະເສີດນັ້ນໄດ້ປະກາດຕໍ່ຄົນຈົນແລ້ວ
11:6 ແລ້ວຜູ້ໃດທີ່ບໍ່ສະດຸດໃຈໃນເຮົາ ຜູ້ນັ້ນຊິໄດ້ພົບເປັນສຸກ”
11:7 ແລ້ວບັດພວກລູກສິດຂອງ ໂຢຮັນ ອອກເມືອແລ້ວ ພຣະເຢຊູ ຕັ້ງຕົ້ນເວົ້າກັບ
ໝູ່ຄົນຢູ່ຫັ້ນເຖິງ ໂຢຮັນ ວ່າ “ພວກເຈົ້າບັດໄດ້ອອກໄປໃນຖິ່ນແຫ້ງແລ້ງ ໄປເພື່ອ
ເບິ່ງອີຫຍັງ ໄປຫາເບິ່ງຕົ້ນອໍ້ໄຫວທີ່ຖືກລົມພັດໄປມາບໍ້
11:8 ພວກເຈົ້າໄດ້ອອກໄປຫາເບິ່ງອີຫຍັງແໜ່ ໄປຫາເບິ່ງຄົນນຸ່ງຜ້າອ່ອນລາຄາ
ແພງໆບໍ້ ນີ້ແຫລະ ຄົນນຸ່ງຜ້າອ່ອນຈັ່ງຊັ້ນມີແຕ່ຢູ່ໃນວັງຂອງກະສັດ
11:9 ແຕ່ພວກເຈົ້າໄດ້ອອກໄປໄດ້ເຫັນອີຫຍັງ ໄດ້ເຫັນຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າບໍ້ ແມ່ນແລ້ວ ເຮົາບອກພວກເຈົ້າວ່າ ໂຢຮັນ ນັ້ນ ລາວກໍເປັນຫລາຍ-
ກວ່າຜູ້ເປັນປາກເປັນສຽງຊື່ໆ ໄດ໋

11:10 ຄືແມ່ນຜູ້ ທີ່ມີຖ້ອຍຄຳຂຽນໄວ້ວ່າ ‘ນີ້ແຫລະ ເຮົາໃຊ້ທູດຂອງເຮົາໄປທາງໜ້າ
ເພິ່ນ ແລ້ວຊິກຽມຫົນທາງໄວ້ທາງໜ້າເພິ່ນ’
11:11 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ໃນພວກຄົນຊຶ່ງເກີດຈາກແມ່ຍິງ
ນັ້ນ ບໍ່ມີໃຜໃຫຍ່ກວ່າ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳນັ້ນດອກ ແຕ່ວ່າຜູ້ທີ່ຕ່ຳຕ້ອຍທີ່-
ສຸດໃນລາຊະອານາຈັກສະຫວັນກໍໃຫຍ່ກວ່າ ໂຢຮັນ ອີກ
11:12 ແລ້ວຕັ້ງແຕ່ສະໄໝ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳມາຮອດມື້ນີ້ ລາຊະອານາຈັກ-
ສະຫວັນກໍເປັນແນວທີ່ຄົນໄດ້ຊອກຫາດ້ວຍໃຈຮ້ອນຮົນ ຄືດຢາກຊິງເອົາໃຫ້ໄດ້
ໂດຍໃຊ້ອຳນາດ
11:13 ຄືຄຳໃນບົດຂອງພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ ກັບໃນບົດຂອງ
ກົດບັນຍັດໄດ້ພະຍາກອນມາຈົນເຖິງສະໄໝຂອງ ໂຢຮັນ ນີ້
11:14 ຄັນພວກເຈົ້າຊິຍອມຮັບໃນເລື່ອງນີ້ ໂຢຮັນ ຜູ້ນີ້ເນາະ ກໍເປັນຄື ເອລີຢາ *ຜູ້ທີ່
ສອງ* ທີ່ຊິມານັ້ນ
11:15 ໃຜມີຫູກໍໃຫ້ຟັງເອົາເດີ້
11:16 ແຕ່ເຮົາຊິປຽບຄົນຍຸກນີ້ຄືອີຫຍັງແໜ່ ປຽບຄືເດັກທີ່ນັ່ງຫລິ້ນກາງຕະຫລາດ
ຮ້ອງຕໍ່ໝູ່
11:17 ເວົ້າວ່າ ‘ພວກຂ້ອຍໄດ້ເປົ່າປີ່ໃຫ້ພວກນາງຟ້ອນລຳ ແລ້ວນາງບໍ່ໄດ້ຟ້ອນລຳ
ພວກຂ້ອຍໄດ້ຮ້ອງໄຫ້ເສຍໃຈໃຫ້ພວກນາງ ແຕ່ພວກນາງບໍ່ໄດ້ຮ້ອງໄຫ້ເສຍໃຈ
ນຳ’
11:18 ຄື ໂຢຮັນ ນັ້ນ ລາວ ບໍ່ໄດ້ກິນໄດ້ດື່ມ ແລ້ວເຂົາຈົ່ງຫາວ່າ ‘ ລາວ ມີຜີເຂົ້າສິງຢູ່’
11:19 ສ່ວນເຮົາຜູ້ເປັນບຸດມະນຸດ ບັດເຮົາມາມີທັງກິນທັງດື່ມ ແລ້ວເຂົາຈົ່ງຫາວ່າ
‘ນີ້ແຫລະ ເປັນຄົນຂີ້ເມົາກິນຈຸຫລາຍ ເປັນໝູ່ກັນກັບພວກເກັບພາສີກັບພວກຂີ້-
ບາບ’ ຈັ່ງໃດກໍຕາມ ພູມິປັນຍາໄດ້ພິສູດວ່າຖືກຕ້ອງແລ້ວຕາມຜົນຂອງມັນ”
11:20 ແລ້ວ ພຣະເຢຊູ ກໍເລີ່ມຕິຕຽນຊາວເມືອງຕ່າງໆ ຍ້ອນເຂົາບໍ່ໄດ້ກັບໃຈໃໝ່
ແມ່ນແຕ່ເພິ່ນເຄີຍໄດ້ເຮັດການອັດສະຈັນແນວເປັນຕາງຶດ ຫລາຍແນວຕໍ່ໜ້າຕໍ່ຕາ
ເຂົາ

11:21 "ລະວັງພິນາດເດີ້ ຊາວເມືອງ ໂຂຣາຊິນ ກັບລະວັງພິນາດເດີ້ ຊາວເມືອງ
ເບດໄຊດາ ຍ້ອນວ່າຄັ່ນການອັດສະຈັນແນວເປັນຕາງຶດທີ່ເຮົາໄດ້ເຮັດໃນໝູ່ພວກ
ເຈົ້ານັ້ນ ຄືໄດ້ເຮັດໃນເມືອງ ຕີເຣ ກັບເມືອງ ຊີໂດນ ໃນສະໄໝກ່ອນນັ້ນ ພວກ-
ເຂົາຄືຊິກັບໃຈ ນຸ່ງຜ້າກະສອບນັ່ງຂີ້ເຖົ່າ ແຕ່ດົນນານ
11:22 ແຕ່ເຮົາຊິບອກພວກເຈົ້າວ່າ ໃນມື້ພິພາກສາທີ່ຊິມາຮອດຫັ້ນ ໂທດຂອງເມືອງ
ຕີເຣ ກັບເມືອງ ຊີໂດນ ກໍຊິເບົາກວ່າໂທດຂອງພວກເຈົ້າ
11:23 ແລ້ວຝ່າຍພວກເຈົ້າ ຊາວເມືອງ ກາເປນາອູມ ເອີຍ ພວກເຈົ້າໄດ້ຍົກຕົວເອງ
ຂຶ້ນຟ້າສະຫວັນແລ້ວ ແຕ່ເຈົ້າຊິຕ້ອງຖືກລາກລົງມາເຖິງນະລົກ ໂດຍວ່າການອັດ-
ສະຈັນແນວເປັນຕາງຶດຊຶ່ງເຮົາໄດ້ເຮັດໃນໝູ່ພວກເຈົ້ານັ້ນ ຄັ່ນໄດ້ເຮັດໃນເມືອງ
ໂສໂດມ ເມືອງນັ້ນກໍຊິຍັງຢູ່ຈົນຮອດຄູ່ມື້ນີ້
11:24 ແຕ່ເຮົາບອກພວກເຈົ້າວ່າ ໃນມື້ພິພາກສາທີ່ຊິມາຮອດຫັ້ນ ໂທດຂອງເມືອງ
ໂສໂດມ ຊິເບົາກວ່າໂທດຂອງເຈົ້າເດີ້"
11:25 ຍາມນັ້ນ ພຣະເຢຊູ ເວົ້າຕໍ່ພຣະເຈົ້າວ່າ "ໂອ້ ຂ້າແດ່ພຣະເຈົ້າຜູ້ເປັນພໍ່ ກັບ
ເປັນພຣະເຈົ້າເໜືອຟ້າສະຫວັນກັບແຜ່ນດິນໂລກ ຜູ້ຂ້າຂໍຂອບຄຸນພໍ່ ທີ່ພໍ່ໄດ້ປິດ-
ບັງສິ່ງແນວໝູ່ນີ້ໄວ້ຈາກຜູ້ມີປັນຍາກັບຜູ້ສະຫລາດ ແລ້ວຈັ່ງເຜີຍໃຫ້ພວກຜູ້
ນ້ອຍໆທີ່ບໍ່ມີຖານະໃຫ້ຮູ້ຈັກນໍາ
11:26 ຈັ່ງໃດກໍຕາມ ການເຮັດຈັ່ງຊີ້ກໍເປັນທີ່ຊອບໃນສາຍຕາຂອງພໍ່
11:27 ພຣະເຈົ້າຜູ້ເປັນພໍ່ໄດ້ມອບໝົດຄູ່ອັນຄູ່ແນວໄວ້ໃຫ້ເຮົາແລ້ວ ແລ້ວບໍ່ມີໃຜຮູ້-
ຈັກເຮົາຜູ້ເປັນ ພຣະບຸດ ນອກຈາກພໍ່ ແລ້ວບໍ່ມີໃຜຮູ້ຈັກພໍ່ທີ່ເປັນພຣະເຈົ້ານອກ
ຈາກເຮົາຜູ້ເປັນບຸດ ພ້ອມທັງຜູ້ທີ່ເຮົາຜູ້ເປັນບຸດພໍໃຈທີ່ຊິເຜີຍໃຫ້ຮູ້ນໍາ
11:28 ຝ່າຍຜູ້ທີ່ເໜັດເໜື່ອຍເມື່ອຍລ້າ ທີ່ໜັກອົກໜັກໃຈ ໃຫ້ມາຫາເຮົາເດີ້ ແລ້ວເຮົາ
ຊິໃຫ້ເຈົ້າເຊົາເໜື່ອຍເປັນສຸກ
11:29 ໃຫ້ແບກແອກຂອງເຮົາໄວ້ເດີ້ ແລ້ວຮຽນຮູ້ຈາກເຮົາ ຍ້ອນວ່າເຮົາອ່ອນສຸພາບ
ກັບຮູ້ຈັກຖ່ອມລົງ ແລ້ວເຈົ້າຊິໄດ້ຮັບການພັກຜ່ອນຍ່ອນໃຈເພື່ອຈິດໃຈຂອງເຈົ້າ
11:30 ຄືແອກຂອງເຮົາກໍແບກງ່າຍ ກັບພາລະຂອງເຮົາກໍເບົາ"

# ມັດທາຍ ບົດທີ 12

12:1 ແລ້ວໃນຍາມນັ້ນ ພໍດີເປັນມື້ພັກງານຂອງ ຊາວຢິວ ພຣະເຢຊູ ໄດ້ຍ່າງລັດໄປ
ໃນທົ່ງນາເຂົ້າ ແລ້ວລູກສິດຂອງເພິ່ນກໍຫິວ ເລີຍເລີ່ມເດັດຮວງເຂົ້າກິນແດ່
12:2 ແຕ່ບັດພໍພວກ ຟາຣີຊາຍ ເຫັນ ພວກເຂົາຈັ່ງເວົ້າໃຫ້ ພຣະເຢຊູ ວ່າ "ນີ້ແຫລະ
ລູກສິດຂອງເຈົ້າເຮັດແນວທີ່ກົດບັນຍັດຫ້າມໄວ້ ບໍ່ໃຫ້ເຮັດວຽກເຮັດງານໃນມື້ພັກ-
ງານຂອງ ຊາວຢິວ ເຮົາ"
12:3 ແຕ່ເພິ່ນບອກພວກເຂົາວ່າ "ພວກເຈົ້າຍັງບໍ່ໄດ້ອ່ານບໍ້ ຊຶ່ງກະສັດ ດາວິດ ໄດ້
ເຮັດບັດ ລາວ ຫິວ ພ້ອມໝູ່ພວກຂອງ ລາວ ນໍາ
12:4 ຄື ລາວ ໄດ້ເຂົ້າໄປໃນເຮືອນຂອງພຣະເຈົ້າ ແລ້ວໄດ້ກິນເຂົ້າຈີ່ອັນສັກສິດ ຊຶ່ງ
ກົດບັນຍັດຫ້າມໄວ້ບໍ່ໃຫ້ ລາວ ກິນ ກັບບໍ່ໃຫ້ໝູ່ ລາວ ກິນນໍາ ແຕ່ມີໄວ້ສະເພາະ
ປະໂລຫິດພວກດຽວເທົ່ານັ້ນທີ່ຊິກິນໄດ້
12:5 ຫລືພວກເຈົ້າບໍ່ໄດ້ອ່ານໃນກົດບັນຍັດບໍ້ ທີ່ວ່າໃນມື້ພັກງານຂອງ ຊາວຢິວ
ພວກປະໂລຫິດໃນພຣະວິຫານ ໄດ້ເຮັດງານຊຶ່ງໄດ້ພາມື້ພັກງານນັ້ນເປັນມົນທິນ
ແຕ່ບໍ່ໄດ້ຖືວ່າຜິດ
12:6 ແຕ່ເຮົາບອກພວກເຈົ້າວ່າ ໃນໜ້ອງນີ້ມີຜູ້ໜຶ່ງຊຶ່ງເປັນໃຫຍ່ ສໍາຄັນກວ່າພຣະ-
ວິຫານອີກ
12:7 ແຕ່ ຄັ້ນພວກເຈົ້າໄດ້ເຂົ້າໃຈຄວາມໝາຍຂອງຂໍ້ທີ່ວ່າ 'ເຮົາປາດຖະໜາຄວາມ
ເມດຕາ ບໍ່ແມ່ນການບູຊາ' ພວກເຈົ້າຄືຊິບໍ່ໄດ້ຕັດສິນລົງໂທດໃຫ້ຜູ້ບໍ່ມີຄວາມຜິດ
12:8 ໂດຍວ່າເຮົາຜູ້ເປັນບຸດມະນຸດກໍເປັນເຈົ້າເປັນນາຍ ຢູ່ເໜືອແມ່ນແຕ່ມື້ພັກງານ
ຂອງ ຊາວຢິວ ເຮົາຊະອີກ"
12:9 ແລ້ວບັດ ພຣະເຢຊູ ໄດ້ອອກຈາກ *ທົ່ງນາ* ນັ້ນໄປ ເພິ່ນກໍເຂົ້າໄປໃນສາລາທໍາ
ຂອງ ຊາວຢິວ
12:10 ນີ້ແຫລະ ມີຜູ້ຊາຍຄົນໜຶ່ງເປັນມືລີບຂ້າງໜຶ່ງ ບັດນີ້ພວກຄົນຢູ່ຫັ້ນຖາມເພິ່ນ
ວ່າ "ກົດບັນຍັດຫ້າມໄວ້ບໍ້ ທີ່ຊິປົວໂລກໃນມື້ພັກງານຂອງພວກຢິວເຮົາ" ເຂົາຖາມ
ຈັ່ງຊີ້ກໍເພື່ອຊິຫາແນວຈັບຜິດຟ້ອງຮ້ອງເພິ່ນໄດ້

12:11 ແລ້ວ ພຣະເຢຊູ ຈັ່ງຖາມພວກເຂົາວ່າ “ມີຜູ້ໃດໃນພວກເຈົ້າທີ່ມີແກະໂຕດຽວ
ແລ້ວແກະໂຕນັ້ນຕົກບໍ່ໃນມື້ພັກງານຂອງ ຊາວຢິວ ເຮົາ ຜູ້ນັ້ນຊິບໍ່ຈັບແກະໂຕນັ້ນ
ລາກຂຶ້ນມາບໍ້
12:12 ຄົນໃດຄົນໜຶ່ງຊິມີຄຸນຄ່າສູງກວ່າໂຕແກະບໍ່ແມ່ນບໍ້ ຈັ່ງຊັ້ນມັນກໍເປັນການຖືກ
ແລ້ວບໍ່ມີຜິດທີ່ຊິເຮັດແນວມັນດີໃນມື້ພັກງານຂອງ ຊາວຢິວ ເຮົາ”
12:13 ເວົ້າແລ້ວເພິ່ນໄດ້ສັ່ງຜູ້ຊາຍຄົນນັ້ນວ່າ “ໃຫ້ຢຽດມືລີບຂອງເຈົ້າອອກມາເດີ້”
ພໍຢຽດອອກມາແລ້ວ ມືນັ້ນກໍເຊົາເປັນລີບກັບໝ້ອງ ດີຄືມືອີກຂ້າງໜຶ່ງ
12:14 ບັດນີ້ ພວກ ຟາຣີຊາຍ ກໍອອກໄປປຶກສາກັນເຖິງວ່າ ຊິເຮັດຈັ່ງໃດຈັ່ງຊິຈັດ-
ການເຮັດຮ້າຍ ພຣະເຢຊູ ໄດ້
12:15 ແຕ່ບັດພໍ ພຣະເຢຊູ ຮູ້ທັນ *ໃນແຜນການຂອງເຂົາ* ເພິ່ນຈັ່ງອອກຈາກໝ້ອງ
ນັ້ນໄປ ແລ້ວມີຄົນຫລວງຫລາຍໄດ້ຕາມເພິ່ນໄປ ພຣະເຢຊູ ຈັ່ງປົວພວກເຂົາໃຫ້
ເຊົາເປັນພະຍາດ ໝົດຄູ່ຄົນ
12:16 ປົວແລ້ວ ເພິ່ນໄດ້ສັ່ງພວກເຂົາໄວ້ ຫ້າມບໍ່ໃຫ້ເຜີຍວ່າເພິ່ນເປັນຜູ້ໃດ
12:17 ນີ້ກໍເພື່ອຊິເປັນໄປຕາມຖ້ອຍຄໍາຂອງ ເອຊາຢາ ຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າ ທີ່ທໍານາຍໄວ້ວ່າ
12:18 “ນີ້ແຫລະ ຜູ້ຮັບໃຊ້ຂອງເຮົາຊຶ່ງເຮົາໄດ້ເລືອກໄວ້ ຜູ້ທີ່ເຮົາຮັກແພງພໍໃຈ
ຫລາຍ ເຮົາຊິໃຫ້ ພຣະວິນຍານ ຂອງເຮົາສະຖິດຢູ່ນໍາເຂົາ ແລ້ວເຂົາຊິປະກາດ
ທາງຂອງຄວາມຍຸດຕິທໍາໃຫ້ພວກຄົນຕ່າງຊາດ
12:19 ແລ້ວເພິ່ນຊິບໍ່ທະເລາະວິວາດກັບໃຜ ກັບເພິ່ນຊິບໍ່ອອກສຽງໂຫ່ຮ້ອງ ແລ້ວບໍ່ມີ
ໃຜຊິໄດ້ຍິນສຽງໂຮ່ງດັ່ງຂອງເພິ່ນຕາມຫົນທາງ
12:20 ແລ້ວເພິ່ນຊິບໍ່ໄດ້ຫັກໄມ້ອໍ້ທີ່ຊໍ້າ ກັບຊິບໍ່ດັບໄສ້ຕະກຽງທີ່ໃກ້ຊິມອດ ຈົນກວ່າ
ຜູ້ຍຸດຕິທໍາຊິປາກົດຂຶ້ນດ້ວຍການໄຊຊະນະ
12:21 ແລ້ວພວກຄົນຕ່າງຊາດກໍຊິວາງໃຈໃນນາມຂອງເພິ່ນ”
12:22 ຢູ່ມາມີພວກຄົນໄດ້ພາຜູ້ຊາຍຄົນໜຶ່ງມີຜີເຂົ້າສິງ ມາຫາ ພຣະເຢຊູ ຄົນນັ້ນ
ເປັນທັງຕາບອດພ້ອມປາກກືກນໍາ ພຣະເຢຊູ ກໍເລີຍປົວເຂົາໃຫ້ເຊົາເປັນດີກັບ
ໝ້ອງ ຄືຕາກໍເຫັນໄດ້ກັບປາກກໍເວົ້າໄດ້

12:23 ແລ້ວໝົດຄູ່ຄົນກໍແປກໃຈເປັນຕາງຶດຈັ່ງຖາມກັນວ່າ “ຄົນນີ້ເປັນລູກຫລານ
ຂອງກະສັດ ດາວິດ ບໍ່ແມ່ນບໍ້”
12:24 ແຕ່ຝ່າຍພວກ ຟາຣີຊາຍ ບັດໄດ້ຍິນເລື່ອງການປົວເຂົາກໍເວົ້າວ່າ “ຜູ້ນີ້ບໍ່ໄດ້
ຂັບໄລ່ຜີອອກດອກ ນອກຈາກໂດຍອຳນາດຂອງ ເຈົ້າ ພະຍາມານ ເບເອນເຊ-
ບູນ ເຈົ້າຜີໃຫຍ່ຂອງຄວາມມືດນັ້ນ”
12:25 ສ່ວນ ພຣະເຢຊູ ກໍຮູ້ຈັກຄວາມຄຶດຂອງພວກເຂົາ ຈັ່ງບອກເຂົາວ່າ “ລາຊະ-
ອານາຈັກໃດໆ ຊຶ່ງແຕກແຍກກັນພາຍໃນກໍຊິຕ້ອງລົ້ມລົງ ແລ້ວເມືອງໃດໆ ເຮືອນ
ໃດໆ ທີ່ແຕກແຍກກັນພາຍໃນກໍຊິພັງທະລາຍ ຢູ່ຕໍ່ໄປບໍ່ໄດ້ເລີຍ
12:26 ຄືຄັ່ນຜີ ພະຍາມານ ຊາຕານສາມາດຊິຂັບໄລ່ໂຕມັນເອງອອກໄປ ສະແດງ
ວ່າມັນກໍແຕກແຍກກັນພາຍໃນຢູ່ແລ້ວ ຄັ່ນຈັ່ງຊັ້ນລາຊະອານາຈັກຂອງມັນຊິຢູ່ຕໍ່-
ໄປໄດ້ຈັ່ງໃດ
12:27 ແລ້ວຄັ່ນເຮົາຂັບໄລ່ຜີອອກໂດຍອຳນາດຂອງເຈົ້າ ພະຍາມານ ເບເອນເຊ-
ບູນ ນັ້ນ *(ຕາມທີ່ເຈົ້າຫາເວົ້ານີ້)* ໝູ່ພວກຂອງເຈົ້າຂັບໄລ່ຜີອອກໂດຍອຳນາດ
ຂອງໃຜສັ່ນ ຈັ່ງຊັ້ນພວກເຂົາເອງຊິເປັນຜູ້ຊີ້ໜ້າຕັດສິນພວກເຈົ້າເອົາ ໂລດ
12:28 ແຕ່ຄັ່ນເຮົາຂັບໄລ່ຜີອອກດ້ວຍອຳນາດຂອງ ພຣະວິນຍານ ຂອງພຣະເຈົ້າ ກໍ
ສະແດງວ່າລາຊະອານາຈັກຂອງພຣະເຈົ້ານັ້ນໄດ້ມາຮອດມາເຖິງພວກເຈົ້າແລ້ວ
12:29 ບໍ່ຊັ້ນ ເວົ້າພື້ນ ຄົນຊິເຂົ້າໄປປຸ້ນເອົາຊັບໃນເຮືອນຂອງຄົນຜູ້ມີກຳລັງໄດ້ຈັ່ງໃດ
ນອກຈາກຊິຈັບມັດຄົນຜູ້ມີກຳລັງນັ້ນໄວ້ຊະກ່ອນ ຈັ່ງຊິປຸ້ນເອົາຊັບໃນເຮືອນຂອງ
ເຂົາໄດ້
12:30 ຄືຜູ້ທີ່ບໍ່ຢູ່ຝ່າຍເຮົາກໍເປັນປະຕິປັກຕໍ່ເຮົາ ກັບຜູ້ທີ່ບໍ່ໄດ້ຮ່ວມຊ່ອຍເຮົາໃນການ
ເກັບກ່ຽວ ຜູ້ນັ້ນກໍຢູ່ຝ່າຍການແຕກແຍກໃຫ້ກະຈັກກະຈາຍອອກໄປ
12:31 ຈັ່ງຊັ້ນ ເຮົາບອກພວກເຈົ້າວ່າ ຄວາມຜິດບາບກັບຄຳໝິ່ນປະມາດໝົດຄູ່ແນວ
ຂອງຄົນຊິໄດ້ຮັບການຍົກໂທດໃຫ້ອະໄພໄດ້ໝົດ ເວັ້ນແຕ່ຄຳຫລົບຫລູ່ດູໝິ່ນ
ພຣະວິນຍານ ຜູ້ນັ້ນຊິບໍ່ໄດ້ຮັບການຍົກໂທດໃຫ້ອະໄພຈັກເທື່ອເລີຍ

12:32 ແລ້ວແມ່ນຜູ້ໃດຊິເວົ້າດູໝິ່ນດູຖູກໃສ່ເຮົາຜູ້ເປັນບຸດມະນຸດ ຜູ້ນັ້ນກໍຊິໄດ້ຮັບ
ການຍົກໂທດໃຫ້ອະໄພໄດ້ ໂລດ ແຕ່ວ່າຜູ້ໃດທີ່ເວົ້າດູໝິ່ນດູຖູກໃສ່ ພຣະວິນ-
ຍານ ຜູ້ນັ້ນຊິບໍ່ໄດ້ຮັບການຍົກໂທດໃຫ້ອະໄພຈັກເທື່ອເລີຍ ບໍ່ວ່າຊິຢູ່ໃນໂລກນີ້
ຫລືໃນໂລກທີ່ຊິມາໃນພາຍໜ້ານັ້ນ ກໍບໍ່ໄດ້ຄືກັນ
12:33 ຄືວ່າ ຄັ່ນກົກໄມ້ດີ ໝາກຂອງມັນກໍຊິດີໄປນຳ ແຕ່ຄັ່ນກົກໄມ້ເລວ ໝາກຂອງ
ມັນກໍຊິເລວຕາມ ໂດຍວ່າຄົນເຮົາສາມາດຮູ້ຈັກວ່າດີຫລືບໍ່ດີໄດ້ໂດຍພິຈາລະນາ
ເບິ່ງໝາກເບິ່ງຜົນ
12:34 ໂອ້ ຊາດງູຮ້າຍເອີຍ ເຈົ້າພວກຊາດຊົ່ວ ຊິເວົ້າໃນທາງດີໄດ້ຈັ່ງໃດ ຄືປາກມັກ
ຊິເວົ້າອອກຈາກໃຈທີ່ເຕັມລົ້ນດ້ວຍແນວໃດແນວໜຶ່ງ
12:35 ຄືຜູ້ດີກໍຊິເວົ້າແນວດີອອກຈາກສົມບັດອັນດີໃນໃຈຂອງເຂົາ ແຕ່ຄົນຊົ່ວກໍຊິ
ເວົ້າແນວຊົ່ວອອກຈາກສົມບັດອັນຊົ່ວໃນໃຈຂອງເຂົາຄືກັນ
12:36 ແຕ່ເຮົາບອກພວກເຈົ້າວ່າ ໝົດຄູ່ຄຳທີ່ບໍ່ເປັນສາລະຊຶ່ງຄົນເວົ້າອອກມານັ້ນ
ເຂົາຊິຕ້ອງໃຫ້ການສຳລັບຄຳແນວໝູ່ນັ້ນ ໃນມື້ການພິພາກສາທີ່ຊິມາໃນທາງໜ້າ
ນັ້ນ
12:37 ຄື ໂດຍຖ້ອຍຄຳຂອງເຈົ້ານັ້ນ ອາດ ພິສູດໄດ້ວ່າເຈົ້າເປັນຄົນຊອບທຳ ຫລືວ່າ
ໂດຍຖ້ອຍຄຳຂອງເຈົ້າ ອາດ ພິສູດໄດ້ວ່າເຈົ້າຕ້ອງຖືກການຕັດສິນລົງໂທດ”
12:38 ຍາມນັ້ນພໍດີ ມີຜູ້ລາງຄົນໃນພວກນັກທຳກັບພວກ ຟາຣີຊາຍ ເວົ້າເປັນການ
ເຍາະເຍີ້ຍກັບ ພຣະເຢຊູ ວ່າ “ອາຈານເຈົ້າຂ້າ ພວກຜູ້ຂ້າຢາກຊິເຫັນເຄື່ອງໝາຍ
ສຳຄັນຈາກທ່ານແໜ່”
12:39 ແຕ່ ພຣະເຢຊູ ຕອບເຂົາວ່າ “ພວກຊາດຊົ່ວທີ່ຫລິ້ນຊູ້ *ນອກໃຈພຣະເຈົ້າ*
ຊອກຫາເຄື່ອງໝາຍສຳຄັນ ແຕ່ຊິບໍ່ມີໃຫ້ເຂົາດອກ ເວັ້ນແຕ່ເຄື່ອງໝາຍສຳຄັນ
ຂອງ ໂຢນາ ຜູ້ເປັນປາກເປັນສຽງຂອງພຣະເຈົ້ານັ້ນ
12:40 ຄືວ່າ ‘ ໂຢນາ ໄດ້ຢູ່ໃນທ້ອງປາວານສາມມື້ສາມຄືນ’ ສໍ່າໃດ ເຮົາຜູ້ເປັນບຸດ
ມະນຸດກໍຊິຢູ່ໃນທ້ອງແຜ່ນດິນໂລກສາມມື້ສາມຄືນສໍ່ານັ້ນ

12:41 ແລ້ວຊາວເມືອງ ນີເນເວ ນັ້ນ ຊິລຸກຂຶ້ນໃນມື້ພິພາກສາຂອງຄົນຍຸກນີ້ ແລ້ວຊິ
ຊີ້ໜ້າຕັດສິນລົງໂທດເຂົາ ຍ້ອນວ່າຊາວເມືອງ ນີເນເວ ນັ້ນໄດ້ກັບໃຈໃໝ່ຕາມຄຳ
ປະກາດຂອງ ໂຢນາ ແລ້ວນີ້ແຫລະ ມີຜູ້ຍິ່ງໃຫຍ່ກວ່າ ໂຢນາ ໄດ້ຢູ່ນີ້ແລ້ວ
12:42 ແລ້ວລາຊີນີທີ່ມາຈາກທາງທິດໃຕ້ ລາຊີນີຊິລຸກຂຶ້ນໃນມື້ພິພາກສາຂອງພວກ
ຄົນຍຸກນີ້ ແລ້ວຊິຊີ້ໜ້າຕັດສິນລົງໂທດເຂົາ ຄືວ່າລາຊີນີນັ້ນໄດ້ມາຈາກທີ່ສຸດປາຍ-
ແຜ່ນດິນໂລກ ເພື່ອຊິຟັງສະຕິປັນຍາຂອງກະສັດ ໂຊໂລໂມນ ແລ້ວນີ້ແຫລະ ມີຜູ້
ຍິ່ງໃຫຍ່ກວ່າກະສັດ ໂຊໂລໂມນ ໄດ້ຢູ່ນີ້ແລ້ວ
12:43 ຄືວ່າ ບັດຜີໂສໂຄກອອກຈາກຄົນແລ້ວ ມັນກໍວົນໄປວຽນມາໃນຖິ່ນແຫ້ງແລ້ງ
ຊອກຫາໜ້ອງຢຸດພັກແຕ່ບໍ່ພໍ້ເລີຍ
12:44 ມັນເລີຍເວົ້າວ່າ ‘ຂ້ອຍຊິຫລົບໄປຢູ່ເຮືອນເກົ່າຂອງຂ້ອຍທີ່ອອກມານັ້ນ’ ແລ້ວ
ບັດຜີນັ້ນຫລົບໄປ ກໍເຫັນເຮືອນນັ້ນຍັງຫວ່າງຢູ່ ກັບຖືກປັດກວາດ ຕົກແຕ່ງໄວ້
ຢ່າງສວຍງາມ
12:45 ແລ້ວມັນຈັ່ງໄປຊວນຜີອີກເຈັດໂຕແຮງຮ້າຍກວ່າມັນອີກ ແລ້ວພວກມັນກໍພາ-
ກັນເຂົ້າຢູ່ເຮືອນນັ້ນ ແລ້ວໃນຍາມສຸດທ້າຍຄົນນັ້ນກໍຕົກຢູ່ໃນສະພາບແຮງຮ້າຍ
ກວ່າທຳອິດ ແລ້ວສ່ວນຄົນຊາດຊົ່ວນີ້ກໍເປັນຈັ່ງຊັ້ນ”
12:46 ບັດພໍ ພຣະເຢຊູ ຍັງເວົ້າກັບພວກຄົນຢູ່ຫັ້ນ ນີ້ແຫລະ ແມ່ກັບພວກນ້ອງຊາຍ
ຂອງເພິ່ນພາກັນມາຫາຢືນຢູ່ທາງນອກ ຢາກຊຸມກັບເພິ່ນ
12:47 ແລ້ວມີຄົນໜຶ່ງເວົ້າກັບເພິ່ນວ່າ “ນີ້ແຫລະ ແມ່ກັບພວກນ້ອງຊາຍຂອງທ່ານ
ຢືນຢູ່ທາງນອກຢາກຊິເວົ້ານຳທ່ານ”
12:48 ແຕ່ ພຣະເຢຊູ ຕອບຜູ້ທີ່ເວົ້ານັ້ນວ່າ “ໃຜແໜ່ເປັນແມ່ຂອງເຮົາ ກັບເປັນພີ່-
ນ້ອງກັນກັບເຮົາ”
12:49 ເວົ້າແລ້ວເພິ່ນກໍຢຽດມືອອກໄປທາງພວກລູກສິດຂອງເພິ່ນ ເວົ້າວ່າ “ນີ້ແຫລະ
ນີ້ແມ່ນແມ່ກັບພີ່ນ້ອງຂອງເຮົາ
12:50 ຄືວ່າ ຜູ້ໃດກໍຕາມທີ່ຊິເຮັດຕາມຈຸດປະສົງຂອງພຣະເຈົ້າ ຜູ້ເປັນພໍ່ຂອງເຮົາ ຜູ້
ເພິ່ນສະຖິດໃນສະຫວັນ ຜູ້ນັ້ນເນາະເປັນພີ່ນ້ອງຊາຍຍິງກັບເປັນແມ່ຂອງເຮົາ”

# ມັດທາຍ ບົດທີ 13

13:1 ໃນມື້ດຽວກັນນັ້ນ ພຣະເຢຊູ ໄດ້ລົງຈາກເຮືອນ ອອກໄປນັ່ງຢູ່ຊາຍທະເລ
13:2 ແລ້ວມີຄົນຫລວງຫລາຍໄດ້ພາກັນມາຫາເພິ່ນ ພຣະເຢຊູ ຈັ່ງລົງໄປນັ່ງຢູ່ໃນ
ເຮືອ ແລ້ວຄົນພວກນັ້ນກໍຢືນຢູ່ເທິງຝັ່ງ
13:3 ແລ້ວ ພຣະເຢຊູ ຈັ່ງໄດ້ເວົ້າກັບເຂົາຫລາຍອັນຫລາຍແນວເປັນຄຳປຽບທຽບ
ວ່າ “ນີ້ແຫລະ ມີຜູ້ຫວ່ານຄົນໜຶ່ງອອກໄປຫວ່ານເມັດເຂົ້າ
13:4 ແລ້ວບັດພວມຫວ່ານຢູ່ຫັ້ນ ລາງເມັດກໍຕົກຕາມແຄມທາງ ແລ້ວນົກກໍລົງມາ
ກິນໝົດ
13:5 ລາງເມັດກໍຕົກໃສ່ໜ້ອງທີ່ເປັນພື້ນຫີນ ມີເນື້ອດິນບາງໆ ຈັ່ງງອກຂຶ້ນໂດຍໄວ
ຍ້ອນດິນບໍ່ເລິກ
13:6 ແລ້ວບັດຕະເວັນຂຶ້ນ ມັນກໍຖືກແດດເຜົາຍ້ອນບໍ່ມີຮາກເລີຍຫ່ຽວໄປ
13:7 ແລ້ວລາງເມັດກໍຕົກຢູ່ກາງໜາມ ແຕ່ໜາມໄດ້ງອກຂຶ້ນກ່ອນເລີຍປົກຄຸມມັນໄວ້
13:8 ແລ້ວລາງເມັດກໍຕົກໃສ່ດິນດີ ແລ້ວເກີດຜົນ ໄດ້ຮ້ອຍເທົ່າແດ່ ຫົກສິບເທົ່າແດ່
ສາມສິບເທົ່າແດ່
13:9 ໃຜມີຫູກໍໃຫ້ຟັງເອົາເດີ້”
13:10 ແລ້ວຝ່າຍພວກລູກສິດຈັ່ງຖາມ ພຣະເຢຊູ ວ່າ “ເປັນຫຍັງທ່ານຈັ່ງເວົ້າກັບ
ພວກເຂົາເປັນແຕ່ຄຳປຽບທຽບຊື່ໆ”
13:11 ເພິ່ນຈັ່ງຕອບພວກລູກສິດວ່າ “ຍ້ອນວ່າ ຖ້ອຍຄຳອັນເລິກລັບເລື່ອງລາຊະ-
ອານາຈັກສະຫວັນນັ້ນໄດ້ມອບໃຫ້ພວກເຈົ້າທີ່ຊິຮູ້ຈັກນຳ ແຕ່ສຳລັບພວກຄົນ
ພາຍນອກຫັ້ນກໍບໍ່ເລີຍ
13:12 ຄືວ່າຜູ້ໃດມີຢູ່ແລ້ວ ກໍຊິເຕີມໃຫ້ຜູ້ນັ້ນເພີ່ມອີກ ແຕ່ຜູ້ໃດທີ່ບໍ່ມີ ແມ່ນແຕ່ແນວທີ່
ເຂົາມີຢູ່ແລ້ວ ກໍຊິເອົາອອກໄປຈາກເຂົາ
13:13 ຈັ່ງຊັ້ນ ເຮົາຈັ່ງເວົ້າກັບພວກເຂົາເປັນຄຳປຽບທຽບ ຍ້ອນວ່າເຖິງແມ່ນເຂົາ
ເຫັນກໍຄືບໍ່ເຫັນ ເຖິງໄດ້ຍິນກໍຄືບໍ່ໄດ້ຍິນ ກັບບໍ່ເຂົ້າໃຈນຳ
13:14 ແລ້ວຄຳທຳນາຍຂອງ ເອຊາຢາ ກໍສຳເລັດຢູ່ໃນຄົນພວກນັ້ນທີ່ວ່າ ‘ພວກເຈົ້າ
ຊິໄດ້ຍິນ ແຕ່ຊິບໍ່ເຂົ້າໃຈ ແລ້ວຊິເບິ່ງເຫັນ ແຕ່ຊິບໍ່ໄດ້ຮູ້ຈັກເລີຍ

13:15 ຍ້ອນວ່າ ຈິດໃຈຂອງຊົນຊາດນີ້ກໍໜາປຶກເປັນເຊີ່ງ ຊ່າໆ ຢູ່ ຫູຂອງເຂົາກໍຕຶງ
ຕາຂອງເຂົາກໍປິດໄວ້ແລ້ວ ຢ້ານວ່າໃນຍາມໃດເຂົາ ອາດ ຊິເຫັນດ້ວຍຕາ ກັບໄດ້-
ຍິນດ້ວຍຫູ ກັບເຂົ້າໃຈດ້ວຍໃຈ ແລ້ວຊິຫັນມາກັບໃຈໃໝ່ ແລ້ວເຮົາຈັ່ງຊິປົວເຂົາ
ໃຫ້ເຊົາເປັນດີ'
13:16 ແຕ່ຝ່າຍພວກເຈົ້າ ຕາຂອງເຈົ້າກໍໄດ້ພົບເປັນສຸກແລ້ວຍ້ອນເຈົ້າໄດ້ເຫັນ ກັບ
ຫູຂອງເຈົ້າກໍໄດ້ພົບເປັນສຸກແລ້ວຍ້ອນເຈົ້າໄດ້ຍິນ
13:17 ຄືເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າກັບຜູ້ທ່ຽງທຳຫລາຍຄົນຢາກຊິເຫັນສິ່ງທີ່ຕາຂອງພວກເຈົ້າໄດ້ເຫັນ ແຕ່
ເຂົາບໍ່ໄດ້ເຫັນ ກັບຢາກຊິໄດ້ຍິນສິ່ງທີ່ຫູຂອງພວກເຈົ້າໄດ້ຍິນ ແຕ່ເຂົາບໍ່ໄດ້ຍິນ
13:18 ຈັ່ງຊັ້ນ ໃຫ້ພວກເຈົ້າຮັບຟັງຄຳປຽບທຽບເລື່ອງຜູ້ຫວ່ານເມັດເຂົ້າເດີ້
13:19 ຄື ບັດຜູ້ໃດໄດ້ຍິນ ພຣະຄຳ ຂອງພຣະເຈົ້າເລື່ອງລາຊະອານາຈັກຂອງເພິ່ນ
ນັ້ນແຕ່ບໍ່ເຂົ້າໃຈ ພະຍາມານ ຮ້າຍກໍມາຈົກເອົາ ພຣະຄຳ ທີ່ຫວ່ານໃນໃຈຂອງເຂົາ
ນັ້ນອອກໄປຊະ ອັນນີ້ກໍໄດ້ແກ່ຜູ້ຊຶ່ງຮັບເມັດເຂົ້າທີ່ຕົກຕາມແຄມທາງ
13:20 ກັບຜູ້ທີ່ຮັບເອົາເມັດເຂົ້າທີ່ຕົກໃສ່ດິນບາງທີ່ມີພື້ນຫີນນັ້ນ ໄດ້ແກ່ຜູ້ທີ່ໄດ້ຍິນ
ພຣະຄຳ ຂອງພຣະເຈົ້າ ແລ້ວກໍຮັບເອົາ ໂລດ ດ້ວຍຄວາມດີໃຈ
13:21 ແຕ່ບໍ່ມີຮາກໃນໂຕເອງ ເລີຍທົນຢູ່ນ້ອຍໜຶ່ງ ຄືບັດເກີດການທຸກຍາກລຳບາກ
ຫລືການຂົ່ມເຫງຕ່າງໆ ຍ້ອນ ພຣະຄຳ ຂອງພຣະເຈົ້ານັ້ນ ເປັນອຸປະສັກໃຫ້ໃຈ
ເຂົາສະດຸ້ງແຮງເລີຍເລີກໄປ
13:22 ຜູ້ທີ່ຮັບເມັດເຂົ້າທີ່ຕົກຢູ່ກາງໜາມນັ້ນ ໄດ້ແກ່ຜູ້ທີ່ໄດ້ຮັບຟັງ ພຣະຄຳ ຂອງ
ພຣະເຈົ້າ ຟັງແລ້ວການວິຕົກກັງວົນຕາມຄ່ານິຍົມທາງໂລກນີ້ ກັບການລໍ້ລວງ
ທາງຊັບສິນເງິນທອງ ກໍເລີຍຮັດຫຸ້ມເອົາ ພຣະຄຳ ຂອງພຣະເຈົ້າໄວ້ ການເກີດ
ຜົນຂອງຜູ້ນັ້ນກໍເລີຍເຊົາໄປຕາມ
13:23 ສ່ວນຜູ້ທີ່ຮັບເມັດເຂົ້າທີ່ຕົກໃນດິນດີນັ້ນ ໄດ້ແກ່ຜູ້ທີ່ໄດ້ຍິນ ພຣະຄຳ ຂອງ
ພຣະເຈົ້າ ແລ້ວເຂົ້າໃຈ ຜູ້ນັ້ນເລີຍເກີດຜົນໃນຊີວິດຮ້ອຍເທົ່າແດ່ ຫົກສິບເທົ່າແດ່
ສາມສິບເທົ່າແດ່"

13:24 ແລ້ວ ພຣະເຢຊູ ໄດ້ເວົ້າຄຳປຽບທຽບອີກເລື່ອງໜຶ່ງໃຫ້ພວກເຂົາຟັງວ່າ “ລາ-
ຊະອານາຈັກສະຫວັນປຽບຄືຜູ້ຊາຍຄົນໜຶ່ງ ໄດ້ຫວ່ານເມັດເຂົ້າພັນດີໃນນາຂອງ-
ໂຕ
13:25 ແຕ່ບັດຄົນ ໃຊ້ ນອນຫລັບຢູ່ ທາງສັດຕູຂອງຜູ້ຊາຍຄົນນັ້ນ ລັກມາຫວ່ານ
ເຂົ້າລະມານປົນກັບເຂົ້າພັນດີນັ້ນໄວ້ ແລ້ວກໍຫລົບໜີໄປ
13:26 ບັດຕົ້ນເຂົ້ານັ້ນແຕກໜໍ່ງອກຂຶ້ນອອກຮວງແລ້ວ ເຂົ້າລະມານກໍໄດ້ເຕີບໂຕ
ຂຶ້ນມານຳ
13:27 ພວກຜູ້ຮັບໃຊ້ຂອງນາຍເຮືອນຈັ່ງມາບອກນາຍວ່າ ‘ນາຍເຈົ້າຂ້າ ນາຍໄດ້
ຫວ່ານເຂົ້າພັນດີໃນນາຂອງນາຍບໍ່ແມ່ນບໍ້ ແຕ່ເຂົ້າລະມານນັ້ນມາແຕ່ໃສ’
13:28 ນາຍກໍຕອບພວກເຂົາວ່າ ‘ນີ້ເປັນການເຮັດຂອງສັດຕູເຮົາ’ ພວກຜູ້ຮັບໃຊ້ຈັ່ງ
ຖາມນາຍວ່າ ‘ນາຍຢາກຊິໃຫ້ພວກເຮົາໄປຫລົກເກັບເຂົ້າລະມານນັ້ນອອກບໍ້’
13:29 ແຕ່ນາຍຕອບວ່າ ‘ຢ່າເລີຍ ຢ້ານວ່າບັດພວມຫລົກເຂົ້າລະມານນັ້ນອອກ
ເຂົ້າພັນດີຂອງເຮົາຊິຖືກດຶງອອກມານຳ
13:30 ໃຫ້ທັງສອງໃຫຍ່ໄປພ້ອມກັນຈົນເຖິງຍາມເກັບກ່ຽວ ແລ້ວໃນຍາມເກັບກ່ຽວ
ນັ້ນ ເຮົາຊິສັ່ງພວກຄົນກ່ຽວໄວ້ວ່າ “ໃຫ້ເກັບເອົາເຂົ້າລະມານອອກກ່ອນ ມັດເປັນ
ຟ່ອນໆ ໄວ້ເພື່ອເຜົາໄຟຊະ ແຕ່ເຂົ້າພັນດີນັ້ນ ໃຫ້ຂົນເອົາໄປມ້ຽນໄວ້ໃນເລົ້າເຂົ້າ
ຂອງເຮົາ”’
13:31 ພຣະເຢຊູ ຍັງເວົ້າຄຳປຽບທຽບອີກເລື່ອງໜຶ່ງໃຫ້ເຂົາຟັງວ່າ ‘ລາຊະອານາ-
ຈັກສະຫວັນປຽບຄືເມັດຜັກກາດເມັດໜຶ່ງ ຊຶ່ງຜູ້ຊາຍຄົນໜຶ່ງເອົາໄປເພາະປູກໄວ້
ໃນໄຮ່ນາຂອງໂຕ
13:32 ຊຶ່ງເມັດຜັກກາດນັ້ນກໍນ້ອຍກວ່າເມັດອື່ນໆ ທັງໝົດ ແຕ່ບັດອອກງອກໂຕຂຶ້ນ
ແລ້ວ ມັນກໍຍິ່ງໃຫຍ່ທີ່ສຸດໃນພວກກໍໄມ້ທັງໝົດ ຈັ່ງເຕີບໂຕເປັນກົກໄມ້ໃຫຍ່ອີຫລີ
ເຖິງພວກນົກຈັ່ງມາເຮັດຮັງອາໄສຢູ່ຕາມງ່າຂອງກົກນັ້ນໄດ້’
13:33 ແລ້ວ ພຣະເຢຊູ ຍັງເວົ້າຄຳປຽບທຽບໃຫ້ເຂົາຟັງອີກເລື່ອງໜຶ່ງວ່າ ‘ລາຊະອາ-
ນາຈັກສະຫວັນປຽບຄືເຊື້ອຟູ ຊຶ່ງແມ່ຍິງຜູ້ໜຶ່ງໄດ້ເອົາມາເຈືອລົງໃນແປ້ງສາມຖັງ
ແລ້ວມັນກໍລາມໄປຈົນແປ້ງນັ້ນຟູຂຶ້ນທັງໝົດ’

13:34 ຖ້ອຍຄຳແນວໝູ່ນີ້ທັງໝົດ ພຣະເຢຊູ ໄດ້ເວົ້າກັບໝູ່ຄົນຫລວງຫລາຍເປັນແຕ່
ຄຳປຽບທຽບ ແລ້ວນອກຈາກໃຊ້ຄຳປຽບທຽບເພິ່ນກໍບໍ່ໄດ້ເວົ້າອີຫຍັງກັບພວກເຂົາ
ອີກເລີຍ
13:35 ທັງນີ້ກໍເພື່ອຊິໃຫ້ເປັນໄປຕາມ ພຣະຄຳ ຂອງພຣະເຈົ້າທີ່ເວົ້າໄວ້ໂດຍຜູ້ເປັນ-
ປາກເປັນສຽງຂອງເພິ່ນວ່າ 'ເຮົາຊິເວົ້າຄຳປຽບທຽບດ້ວຍປາກເຮົາ ກັບເຮົາຊິກ່າວ
ຖ້ອຍຄຳຊຶ່ງຖືກປົດຊ່ອນໄວ້ຕັ້ງແຕ່ກ່ອນຊິສ້າງໂລກ'
13:36 ແລ້ວພໍ ພຣະເຢຊູ ໄດ້ສົ່ງຄົນພວກນັ້ນເມືອແລ້ວ ກໍໄດ້ເຂົ້າໄປໃນເຮືອນ ພວກ
ລູກສິດຂອງເພິ່ນກໍເລີຍມາຂໍນຳເພິ່ນວ່າ 'ຊ່ອຍອະທິບາຍໃຫ້ພວກຜູ້ຂ້າເຂົ້າໃຈແ
ໜ່ຄຳປຽບທຽບເລື່ອງເຂົ້າລະມານໃນໄຮ່ນານັ້ນ'
13:37 ພຣະເຢຊູ ເລີຍຕອບເຂົາວ່າ 'ຜູ້ຫວ່ານເມັດເຂົ້າດີນັ້ນໄດ້ແກ່ເຮົາຜູ້ເປັນບຸດ
ມະນຸດ
13:38 ໄຮ່ນານັ້ນໄດ້ແກ່ໂລກນີ້ ສ່ວນເມັດເຂົ້າດີໄດ້ແກ່ລູກໆ ຂອງລາຊະອານາຈັກ
ແຕ່ເຂົ້າລະມານນັ້ນໄດ້ແກ່ລູກໆ ຂອງເຈົ້າ ພະຍາມານ ຮ້າຍ
13:39 ສັດຕູຜູ້ຫວ່ານເຂົ້າລະມານໄດ້ແກ່ຜີ ພະຍາມານ ຊາຕານ ຍາມເກັບກ່ຽວໄດ້
ແກ່ການຈົບລົງຂອງໂລກນີ້ ກັບຜູ້ເກັບກ່ຽວນັ້ນໄດ້ແກ່ພວກເທວະທູດ *ຂອງເຮົາ*
13:40 ຈັ່ງຊັ້ນ ການທີ່ເຂົາເກັບກ່ຽວເຂົ້າລະມານໄປເຜົາໄຟເປັນໄປຈັ່ງໃດ ການຈົບ-
ລົງຂອງໂລກນີ້ກໍຊິເປັນໄປຈັ່ງຊັ້ນ
13:41 ຄືເຮົາຜູ້ເປັນບຸດມະນຸດຊິໃຊ້ພວກເທວະທູດຂອງເຮົາອອກໄປເກັບລວບລວມ
ໝົດຄູ່ແນວທີ່ເປັນອຸປະສັກໃຫ້ສະດຸ້ງຫລົງຜິດ ພ້ອມກັບພວກຜູ້ທີ່ເຮັດຄວາມຊົ່ວ-
ຊ້າເລວຊາມ
13:42 ແລ້ວ *ເທວະທູດເຮົາ* ຊິໂຍນມັນຖິ້ມລົງໃນເຕົາໃຫຍ່ທີ່ມີໄຟລຸກແຮງແສງຈ້າ
ໝ້ອງທີ່ຊິມີການຮ້ອງໄຫ້ກັດແຂ້ວຢູ່ຕະຫລອດ
13:43 ໃນຍາມນັ້ນຜູ້ທ່ຽງທຳຊິສ່ອງແສງຈ້າສະທ້ອນອອກໄປຄືກັນກັບຕະເວັນ ຢູ່ໃນ
ລາຊະອານາຈັກຂອງພຣະເຈົ້າ ຜູ້ເປັນພໍ່ຂອງເຂົາ ໃຜມີຫູກໍໃຫ້ຟັງເອົາເດີ້'
13:44 ອີກແນວໜຶ່ງ ລາຊະອານາຈັກສະຫວັນປຽບຄືຂຸມຊັບທີ່ຖືກຊ່ອນໄວ້ກາງທົ່ງ
ນາທົ່ງໜຶ່ງ ຊຶ່ງບັດນີ້ຄົນໜຶ່ງໄດ້ຮັບ ກໍເລີຍເຊື່ອງໄວ້ອີກ ແລ້ວອອກໄປຂາຍໝົດຄູ່

ອັນຄູ່ແນວທີ່ເຂົາມີຢູ່ ດ້ວຍຄວາມດີອົກດີໃຈ ແລ້ວເອົາເງິນໄປຊື້ທົ່ງນານັ້ນໄວ້ເປັນ
ຂອງໂຕ
13:45 ແລ້ວອີກແນວໜຶ່ງ ລາຊະອານາຈັກສະຫວັນປຽບຄືພໍ່ຄ້າທີ່ຊອກຫາໄຂ່ມຸກ
ຢ່າງດີ
13:46 ຊຶ່ງບັດ ລາວ ໄດ້ຮັບໄຂ່ມຸກທີ່ລໍ້າຄ່າເມັດໜຶ່ງ ຈັ່ງອອກໄປຂາຍໝົດຄູ່ອັນຄູ່
ແນວທີ່ເຂົາມີຢູ່ ແລ້ວໄປຊື້ໄຂ່ມຸກເມັດນັ້ນ
13:47 ອີກແນວໜຶ່ງ ລາຊະອານາຈັກສະຫວັນປຽບຄືອວນທີ່ລາກຢູ່ໃນທະເລ ຈັ່ງຕິດ
ປາໝົດຄູ່ແນວ
13:48 ຊຶ່ງບັດອວນນັ້ນເຕັມແລ້ວເຂົາກໍລາກຂຶ້ນຝັ່ງ ແລ້ວນັ່ງລົງເລືອກເອົາແຕ່ປາໂຕ
ດີໆ ໃສ່ເຂັ່ງໄວ້ ແຕ່ປາບໍ່ເປັນຕາເອົານັ້ນກໍຖິ້ມຊະ
13:49 ຄືໃນຍາມການຈົບລົງຂອງໂລກທີ່ຊິມານັ້ນ ມັນກໍຊິເປັນຈັ່ງຊັ້ນ ຄືພວກເທ-
ວະທູດຊິອອກມາແຍກຄັດຄົນຊົ່ວອອກຈາກຄົນທ່ຽງທໍາ
13:50 ແລ້ວກໍຊິໂຍນຖິ້ມຄົນຊົ່ວນັ້ນລົງໃນເຕົາໃຫຍ່ທີ່ມີໄຟລຸກແຮງແສງຈ້າ ເປັນ
ໜ້ອງທີ່ຊິມີການຮ້ອງໄຫ້ກັດແຂ້ວຢູ່ຕະຫລອດ"
13:51 ເວົ້າແລ້ວ ພຣະເຢຊູ ຖາມເຂົາວ່າ "ຖ້ອຍຄໍາແນວໝູ່ນີ້ພວກເຈົ້າເຂົ້າໃຈແລ້ວ
ບໍ້" ເຂົາຕອບເພິ່ນວ່າ "ເຂົ້າໃຈ ທ່ານເຈົ້າຂ້າ"
13:52 ແລ້ວ ພຣະເຢຊູ ເວົ້າກັບເຂົາວ່າ "ຈັ່ງຊັ້ນ ນັກທໍາຄູ່ຄົນທີ່ໄດ້ຮັບການສອນເຖິງ
ລາຊະອານາຈັກສະຫວັນ ປຽບຄືນາຍເຮືອນທີ່ຊິນໍາເອົາທັງຂອງໃໝ່ກັບຂອງເກົ່າ
ອອກຈາກຄັງຂອງເຂົາ"
13:53 ຕໍ່ມາບັດ ພຣະເຢຊູ ໄດ້ເວົ້າຄໍາປຽບທຽບແນວໝູ່ນີ້ໝົດແລ້ວ ເພິ່ນກໍອອກຈາກ
ໜ້ອງນັ້ນໄປ
13:54 ແລ້ວບັດ ພຣະເຢຊູ ມາຮອດບ້ານເມືອງຂອງເພິ່ນແລ້ວ ເພິ່ນກໍສອນໃນສາ-
ລາທໍາຂອງພວກເຂົາ ຈົນຄົນທັງຫລາຍຢູ່ຫັ້ນແປກໃຈຫລາຍ ແລ້ວເວົ້າກັນວ່າ
"ຄົນຜູ້ນີ້ມີສະຕິປັນຍາກັບການອັດສະຈັນແນວເປັນຕາງຶດນີ້ມາແຕ່ໃສ

13:55 ຄົນຜູ້ນີ້ເປັນລູກຊາຍຂອງຊ່າງໄມ້ນັ້ນບໍ່ແມ່ນບໍ້ ແລ້ວແມ່ຂອງເຂົາຊື່ ມາຣິອາ
ບໍ່ແມ່ນບໍ້ ກັບພວກນ້ອງຊາຍຂອງເຂົາຊື່ ຢາໂກໂບ ໂຢເສ ຊີໂມນ ກັບ ຢູດາ ບໍ່
ແມ່ນບໍ້
13:56 ແລ້ວພວກນ້ອງສາວຂອງເຂົາຄູ່ຄົນກໍຢູ່ກັບເຮົາທາງນີ້ບໍ່ແມ່ນບໍ້ ຖ້າເປັນຈັ່ງ-
ຊັ້ນ ຜູ້ຊາຍຜູ້ນີ້ໄດ້ *ປັນຍາກັບການອັດສະຈັນ* ແນວໝູ່ນີ້ມາແຕ່ໃສສັ່ນ”
13:57 ແລ້ວພວກໄທບ້ານຈັ່ງເກີດການສະດຸດບໍ່ພໍໃຈໃນເພິ່ນ ສ່ວນ ພຣະເຢຊູ ກໍເວົ້າ
ກັບເຂົາວ່າ “ຜູ້ເປັນປາກເປັນສຽງຂອງພຣະເຈົ້າຊິບໍ່ຂາດການນັບຖື ເວັ້ນແຕ່ຢູ່ໃນ
ບ້ານເມືອງຂອງເຂົາເອງ ກັບໃນເຮືອນຂອງເຂົານໍາ”
13:58 ແລ້ວເພິ່ນບໍ່ໄດ້ເຮັດການອັດສະຈັນແນວເປັນຕາງຶດຫລາຍປານໃດຢູ່ໃນ
ເມືອງນັ້ນ ຍ້ອນວ່າພວກເຂົາບໍ່ມີຄວາມເຊື່ອເລີຍ

## ມັດທາຍ ບົດທີ 14

14:1 ຫວ່າງນັ້ນ ຊື່ສຽງຂອງ ພຣະເຢຊູ ເຖິງຫູຂອງເຈົ້າເມືອງ ເຮໂຣດ
14:2 ລາວ ຈັ່ງບອກພວກຄົນໃຊ້ ລາວ ວ່າ “ຜູ້ນີ້ເນາະຕ້ອງເປັນ ໂຢຮັນ ຜູ້ໃຫ້ຮັບພິ-
ທີຈຸ່ມນໍ້າ ໄດ້ເປັນຂຶ້ນມາຈາກຕາຍ ຈັ່ງຊັ້ນການອັດສະຈັນແນວໝູ່ນີ້ໄດ້ມາຈາກ
ລາວ ແນ່”
14:3 ຄືວ່າ ແມ່ນ ເຮໂຣດ ນັ້ນທີ່ໄດ້ຈັບ ໂຢຮັນ ແລ້ວຈັ່ງມັດຂັງຄຸກໄວ້ ຍ້ອນເຫັນແກ່
ຄໍາຂໍຂອງນາງ ເຮໂຣເດຍ ຜູ້ເປັນນ້ອງໃພ້ ເມຍຂອງ ຟີລິບ ນ້ອງຊາຍຂອງ ລາວ
ນັ້ນ
14:4 ຄື ໂຢຮັນ ນີ້ເຄີຍບອກເຕືອນ ເຮໂຣດ ວ່າ “ມັນຜິດກົດບັນຍັດໄດ໋ ທີ່ເຈົ້າເອົາ
ນາງນັ້ນມາເປັນເມຍ”
14:5 ແລ້ວແມ່ນແຕ່ ເຮໂຣດ ຄຶດຊິສັງຫານ ໂຢຮັນ ກໍເຮັດບໍ່ໄດ້ຍ້ອນເຄົາລົບພວກ
ຄົນຫລວງຫລາຍ ຄືເຂົາຖືກັນວ່າ ໂຢຮັນ ນີ້ເປັນປາກເປັນສຽງຂອງພຣະເຈົ້າຜູ້ໜຶ່ງ
14:6 ແຕ່ບັດຮອດຍາມສະຫລອງມື້ເກີດຂອງ ເຮໂຣດ ລູກສາວຂອງນາງ ເຮໂຣ-
ເດຍ ກໍຟ້ອນລໍາຕໍ່ໜ້າແຂກຢູ່ຫັ້ນ ເລີຍເຮັດໃຫ້ ເຮໂຣດ ພໍໃຈຫລາຍ
14:7 ເຮໂຣດ ຈັ່ງຮັບປາກຄໍາສາບານໄວ້ວ່າ ນາງຊິຂໍແນວໃດ ກໍຊິໃຫ້ແນວນັ້ນ

14:8 ລູກສາວຈັ່ງຂໍຕາມທີ່ແມ່ໄດ້ສັ່ງໄວ້ແລ້ວວ່າ “ຂໍຫົວຂອງ ໂຢຮັນ ຜູ້ໃຫ້ຮັບຈຸ່ມນໍ້າ
ນັ້ນ ໃສ່ຖາດມາໃຫ້ລູກຢູ່ນີ້ຄ່ະ”
14:9 ສ່ວນກະສັດ ເຮໂຣດ ກໍເສົ້າໃຈຫລາຍ ຍ້ອນວ່າຄໍາສາບານທີ່ໄດ້ຮັບປາກໄວ້
ແລ້ວນັ້ນ ກໍຕ້ອງເຮັດຕາມ ກັບຍ້ອນເຂົາເກງໃຈພວກແຂກທີ່ນັ່ງກິນກັນກັບ ລາວ
ຈັ່ງອອກຄໍາສັ່ງຕາມທີ່ນາງໄດ້ຂໍ
14:10 ແລ້ວເຂົາຈັ່ງໃຊ້ຄົນໄປຕັດຫົວຂອງ ໂຢຮັນ ໃນຄຸກ
14:11 ເຮັດແລ້ວຄົນນັ້ນກໍເອົາຫົວຂອງ ໂຢຮັນ ໃສ່ຖາດມາມອບໃຫ້ຍິງສາວນັ້ນ ຍິງ-
ສາວກໍເລີຍນໍາໄປໃຫ້ແມ່
14:12 ແລ້ວຝ່າຍພວກລູກສິດຂອງ ໂຢຮັນ ກໍມາຮັບເອົາສົບໄປຝັງໄວ້ ແລ້ວຈັ່ງໄປ
ບອກ ພຣະເຢຊູ ໃຫ້ເພິ່ນຮູ້ຈັກນໍາ
14:13 ບັດ ພຣະເຢຊູ ໄດ້ຍິນແລ້ວ ເພິ່ນຈັ່ງລົງເຮືອອອກຈາກຫັ້ນ ໄປບໍລິເວນເປົ່າ-
ປ່ຽວແຕ່ຜູ້ດຽວເພິ່ນ ແລ້ວບັດພວກຄົນຢູ່ແຖວນັ້ນໄດ້ຍິນ ເຂົາກໍຍ່າງອອກຈາກ
ເມືອງຕ່າງໆ ຕາມຫາ ພຣະເຢຊູ ໄປ
14:14 ແລ້ວບັດ ພຣະເຢຊູ ຂຶ້ນຈາກເຮືອແລ້ວ ກໍຫລຽວເບິ່ງເຫັນຜູ້ຄົນຫລວງຫລາຍ
ຢູ່ຫັ້ນ ເພິ່ນກໍອິຕົນເຂົາຫລາຍ ເລີຍປົວຄົນເຈັບໄຂ້ໄດ້ປ່ວຍຂອງພວກເຂົາໃຫ້ເຊົາ
ເປັນດີ
14:15 ບັດຮອດຍາມແລ້ວ ພວກລູກສິດຂອງ ພຣະເຢຊູ ມາເວົ້າກັບເພິ່ນວ່າ “ນີ້ແມ່ນ
ໜ້ອງອຶດຢາກບໍ່ມີແນວກິນເລີຍ ກັບມັນຊິຄໍ່າແລ້ວ ທ່ານຄວນຊິໃຫ້ຄົນພວກນີ້
ອອກໄປ ເພື່ອເຂົາຊິໄດ້ໄປຫາຊື້ແນວກິນຕາມໝູ່ບ້ານຕ່າງໆ”
14:16 ແຕ່ ພຣະເຢຊູ ເວົ້າກັບພວກລູກສິດວ່າ “ພວກຄົນໝູ່ນີ້ບໍ່ຈໍາເປັນທີ່ຊິຕ້ອງ-
ອອກຈາກໜ້ອງນີ້ໄປດອກ ໃຫ້ພວກເຈົ້າລ້ຽງເຂົາ ໂລດ ”
14:17 ພວກລູກສິດຈັ່ງຕອບ ພຣະເຢຊູ ວ່າ “ພວກຜູ້ຂ້າມີແຕ່ເຂົ້າຈີ່ພຽງຫ້າກ້ອນກັບ
ປາສອງໂຕໝົດເທົ່ານັ້ນ”
14:18 ເພິ່ນຈັ່ງສັ່ງເຂົາວ່າ “ເອົາມັນມາໃຫ້ເຮົາ ໂລດ ເດີ້”
14:19 ແລ້ວເພິ່ນໄດ້ສັ່ງໃຫ້ໝູ່ຄົນຢູ່ຫັ້ນໃຫ້ນັ່ງລົງໃນທົ່ງຫຍ້ານີ້ ແລ້ວໄດ້ຈັບເອົາ
ເຂົ້າຈີ່ຫ້າກ້ອນກັບປາສອງໂຕນັ້ນຂຶ້ນມາ ແລ້ວກໍເງີຍໜ້າເບິ່ງທາງຟ້າສະຫວັນ ຈັ່ງ

ຂອບຄຸນພຣະເຈົ້າ ແລ້ວບິເຂົ້າຈີ່ສົ່ງໃຫ້ພວກລູກສິດ ພວກເຂົາເລີຍແຈກອອກໄປ
ໃຫ້ໝົດຄູ່ຄົນຢູ່ຫັ້ນ
14:20 ແລ້ວເຂົາກໍກິນອີ່ມໝົດຄູ່ຄົນ ສ່ວນທີ່ເຫລືອຫັ້ນ ເຂົາກໍເກັບໄວ້ຮອດສິບສອງ
ກະບຸງເຕັມ
14:21 ແລ້ວຈຳນວນຄົນທີ່ໄດ້ກິນນັ້ນ ນອກຈາກແມ່ຍິງກັບພວກເດັກໆ ມີຜູ້ຊາຍປະ-
ມານຫ້າພັນຄົນ
14:22 ຫລັງຈາກນັ້ນ ພຣະເຢຊູ ໄດ້ສັ່ງໃຫ້ພວກລູກສິດຂອງເພິ່ນລົງເຮືອຂ້າມຟາກ
ໄປກ່ອນ ສ່ວນເພິ່ນກໍຖ້າສົ່ງພວກຄົນຢູ່ຫັ້ນເມືອບ້ານ
14:23 ແລ້ວບັດສົ່ງພວກຄົນຫລວງຫລາຍຢູ່ຫັ້ນເມືອບ້ານໝົດແລ້ວ ເພິ່ນເລີຍຂຶ້ນໄປ
ເທິງພູເຂົາແຕ່ຜູ້ດຽວເພື່ອຊິອະທິຖານເວົ້ານຳພຣະເຈົ້າ ພໍຮອດຄ່ຳ ເພິ່ນກໍຍັງຢູ່ຫັ້ນ
ແຕ່ຜູ້ດຽວເພິ່ນ
14:24 ຍາມນັ້ນເຮືອກໍຢູ່ກາງທະເລແລ້ວ ຖືກຄື້ນໃຫຍ່ຊັດໄປຊັດມາ ຍ້ອນຕ້ອງສູ້ກັບ
ລົມທີ່ພັດມາແຮງ
14:25 ຍາມນັ້ນໃກ້ຊິຮອດແຈ້ງແລ້ວ ພຣະເຢຊູ ຈັ່ງຍ່າງໄປຕາມຜິວນ້ຳທະເລອອກ
ໄປຫາພວກລູກສິດ
14:26 ແລ້ວບັດພວກລູກສິດເຫັນເພິ່ນຍ່າງມາຕາມຜິວນ້ຳທະເລ ເຂົາກໍຕົກໃຈຢ້ານ
ໝົດແຮງ ຈັ່ງຮ້ອງກັນສຽງດັ່ງວ່າ “ຜີມາແລ້ວໆ”
14:27 ໃນຍາມນັ້ນພໍດີ ພຣະເຢຊູ ເວົ້າກັບເຂົາວ່າ “ໃຫ້ດີໃຈ ໂລດ ເດີ້ ແມ່ນໂຕເຮົາ
ເອງດອກ ຢ່າສູ່ຢ້ານເດີ້”
14:28 ຝ່າຍ ເປໂຕ ຈັ່ງຕອບ ພຣະເຢຊູ ວ່າ “ທ່ານເຈົ້າຂ້າ ໂຜດໃຫ້ຜູ້ຂ້າຍ່າງຕາມຜິວ
ນ້ຳໄປຫາທ່ານແໜ່”
14:29 ເພິ່ນເວົ້າວ່າ “ມາ ໂລດ ເດີ້” ບັດ ເປໂຕ ລົງຈາກເຮືອແລ້ວ ລາວກໍຕັ້ງຕົ້ນເລີ່ມ
ຊິຍ່າງເທິງນ້ຳໄປຫາ ພຣະເຢຊູ
14:30 ແຕ່ບັດ ລາວ ຫລຽວເບິ່ງເຫັນລົມພັດແຮງກໍເກີດຢ້ານ ແລ້ວບັດພວມຊິຈົມລົງ
ກໍຮ້ອງວ່າ “ທ່ານເຈົ້າຂ້າ ຊ່ອຍຜູ້ຂ້າແໜ່ທ້ອນ”

14:31 ໃນຍາມນັ້ນພໍດີ ພຣະເຢຊູ ໄດ້ເອື້ອມມືລົງຈັບ ເປໂຕ ໄວ້ ແລ້ວເວົ້າກັບ ລາວ
ວ່າ “ໂອ້ ເຈົ້າຜູ້ມີຄວາມເຊື່ອນ້ອຍແທ້ ເຈົ້າສົງໄສຍ້ອນຫຍັງ”
14:32 ແລ້ວບັດ ພຣະເຢຊູ ກັບ ເປໂຕ ຂຶ້ນເຮືອແລ້ວ ລົມໄດ້ເຊົາກັບໝ້ອງ
14:33 ບັດນີ້ ລູກສິດທີ່ຢູ່ໃນເຮືອຈັ່ງມາເຄົາລົບບູຊາເພິ່ນ ເວົ້າວ່າ “ແຕ່ແທ້ແລ້ວ ທ່ານ
ເປັນ ພຣະບຸດ ຂອງພຣະເຈົ້າອີຫລີ”
14:34 ບັດພວກເຂົາຂ້າມຟາກໄປຮອດແລ້ວ ກໍມາເຖິງຝັ່ງຂອງແຂວງ ເຄັນເນຊາ-
ເຣັດ
14:35 ບັດຄົນຢູ່ຫັ້ນຮູ້ຈັກວ່າ ພຣະເຢຊູ ມາຢູ່ຫັ້ນແລ້ວ ເຂົາກໍໃຊ້ຄົນອອກໄປບອກ
ຂ່າວທົ່ວລ້ອມຮອບແຄວ້ນນັ້ນ ແລ້ວຕ່າງຄົນຕ່າງໄດ້ພາກັນນໍາຄົນໂລກໄພໄຂ້-
ເຈັບມາຫາເພິ່ນ
14:36 ແລ້ວພວກເຂົາອ້ອນວອນ ພຣະເຢຊູ ຈັ່ງໄດ້ຂໍພຽງແຕ່ເອົາມືແຕະຜູ້ຊາຍເສື້ອ
ຄຸມເພິ່ນ ແລ້ວຜູ້ໃດໄດ້ເອົາມືແຕະຜູ້ຊາຍເສື້ອຂອງເພິ່ນ ກໍເຊົາປ່ວຍເປັນດີຄູ່ຄົນ
ຢ່າງສົມບູນແບບໝົດ

## ມັດທາຍ ບົດທີ 15

15:1 ຫວ່າງນັ້ນ ພວກນັກທໍາກັບພວກ ຟາຣີຊາຍ ຊຶ່ງມາຈາກເມືອງ ເຢຣູຊາເລັມ
ມາຖາມ ພຣະເຢຊູ ວ່າ
15:2 “ເປັນຫຍັງພວກລູກສິດຂອງເຈົ້າຈັ່ງລະເມີດປະເພນີທີ່ສືບທອດມາຈາກພວກ
ບັນພະບຸລຸດຂອງເຮົາ ຄືເຂົາບໍ່ໄດ້ລ້າງມືກ່ອນກິນ”
15:3 ແຕ່ ພຣະເຢຊູ ໄດ້ຕອບເຂົາວ່າ “ແລ້ວເປັນຫຍັງພວກເຈົ້າຈັ່ງລະເມີດກົດບັນ-
ຍັດຂອງພຣະເຈົ້າດ້ວຍປະເພນີຂອງພວກເຈົ້າເອງ
15:4 ຄື ພຣະເຈົ້າໄດ້ສັ່ງໄວ້ວ່າ ‘ໃຫ້ກຽດພໍ່ແມ່ຂອງໂຕ’ ແລ້ວ ‘ຜູ້ໃດສາບແຊ່ງພໍ່ແມ່
ຂອງໂຕ ຜູ້ນັ້ນຕ້ອງຖືກລົງໂທດເຖິງຕາຍ’
15:5 ແຕ່ພວກເຈົ້ານີ້ກັບສອນກັນວ່າ ‘ຜູ້ໃດທີ່ຊິບອກພໍ່ແມ່ວ່າ “ແນວໃດຂອງຜູ້ຂ້າທີ່
ອາດ ເປັນປະໂຫຍດໃຫ້ພໍ່ແມ່ ແນວນັ້ນກໍເປັນຂອງຖວາຍພຣະເຈົ້າແລ້ວ”

15:6 ຜູ້ນັ້ນບໍ່ຈຳເປັນຊິໃຫ້ກຽດພໍ່ແມ່ຂອງໂຕ’ ການທີ່ພວກເຈົ້າສອນຈັ່ງຊັ້ນ ກໍເຮັດ
ໃຫ້ກົດບັນຍັດຂອງພຣະເຈົ້າຈືດຈາງໄປ ບໍ່ມີປະໂຫຍດອີຫຍັງ ຕາມປະເພນີຂອງ
ພວກເຈົ້ານີ້
15:7 ໂອ້ ພວກໜ້າຊື່ໃຈຄົດເອີຍ ຜູ້ເປັນປາກເປັນສຽງ ເອຊາຢາ ໄດ້ເວົ້າຖືກຕ້ອງພໍ
ແຮງແລ້ວເຖິງພວກເຈົ້ານີ້
15:8 ວ່າ ‘ຄົນພວກນີ້ເຂົ້າມາໃກ້ເຮົາດ້ວຍປາກຂອງເຂົາ ກັບໃຫ້ກຽດເຮົາແຕ່ສົບ
ຂອງເຂົາຊື່ໆ ແຕ່ວ່າຈິດໃຈຂອງເຂົາຫ່າງໄກຈາກເຮົາຢ່າງໄກຫຼາຍ
15:9 ຄືການທີ່ເຂົາພວກນີ້ເຄົາລົບບູຊາເຮົາກໍຂາດສາລະ ຄືເຂົາເອົາບົດສອນຂອງ
ຄົນມາອ້າງວ່າເປັນຫລັກຄຳສອນ *ຂອງພຣະເຈົ້າ* ’”
15:10 ເວົ້າແລ້ວ ພຣະເຢຊູ ກໍເອີ້ນພວກຄົນຫລວງຫລາຍຢູ່ຫັ້ນມາ ແລ້ວໄດ້ບອກ
ເຂົາວ່າ “ໃຫ້ຟັງເອົາກັບເຂົ້າໃຈເດີ້
15:11 ແນວໃດທີ່ເຂົ້າໄປໃນປາກ ກໍບໍ່ໄດ້ພາເຮັດໃຫ້ຄົນເປັນມົນທິນດອກ ແຕ່ແນວ
ທີ່ອອກມາຈາກປາກນັ້ນເນາະ ເປັນແນວທີ່ພາເຮັດໃຫ້ຄົນເປັນມົນທິນ”
15:12 ຍາມນັ້ນ ພວກລູກສິດມາເວົ້າກັບເພິ່ນວ່າ “ທ່ານຮູ້ບໍ້ວ່າ ບັດພວກ ຟາຣີຊາຍ
ໄດ້ຍິນຄຳເວົ້ານັ້ນ ເຂົາກໍສະດຸດບໍ່ພໍໃຈເລີຍ”
15:13 ພຣະເຢຊູ ຈັ່ງຕອບວ່າ “ກົກໄມ້ໃດທີ່ພຣະເຈົ້າຜູ້ເປັນພໍ່ຂອງເຮົາ (ຜູ້ເພິ່ນສະ-
ຖິດໃນສະຫວັນ) ບໍ່ໄດ້ປູກ ກົກນັ້ນຊິຕ້ອງຖືກຖອນອອກໝົດທັງຮາກ
15:14 ຢ່າສົນນຳພວກເຂົາເລີຍ ຄືພວກນີ້ເປັນຄົນຕາບອດຈູງຄົນຕາບອດໄປ ຄືວ່າ
ຄັ່ນຄົນຕາບອດຈູງຄົນຕາບອດ ເຂົາທັງສອງຊິມີແຕ່ພາກັນຕົກຄອງເອົາ ໂລດ ”
15:15 ຝ່າຍ ເປໂຕ ໄດ້ຂໍເພິ່ນວ່າ “ຊ່ອຍອະທິບາຍຄຳປຽບທຽບນີ້ໃຫ້ພວກຜູ້ຂ້າຮູ້ຈັກ
ນຳແໜ່”
15:16 ສ່ວນ ພຣະເຢຊູ ເລີຍຕອບວ່າ “ພວກເຈົ້າຍັງຂາດຄວາມເຂົ້າໃຈບໍ້
15:17 ຄືພວກເຈົ້າຍັງບໍ່ທັນເຂົ້າໃຈດີ ວ່າອີຫຍັງໆ ທີ່ເຂົ້າໄປໃນປາກກໍກືນລົງໃນ
ທ້ອງ ແລ້ວກໍຖ່າຍອອກໄປ
15:18 ແຕ່ແນວທີ່ອອກຈາກປາກນັ້ນ ກໍຕ້ອງອອກມາຈາກໃຈຊະກ່ອນ ແນວນັ້ນ
ເນາະໄດ້ເຮັດໃຫ້ຄົນເປັນມົນທິນ

15:19 ຄືແນວນັ້ນທີ່ອອກມາຈາກໃຈຂອງຄົນ ມີແຕ່ຄວາມຄິດຊົ່ວຮ້າຍ ຄືການຂ້າ
ການຜິດຜົວຜິດເມຍ ການຫລິ້ນຊູ້ ການລັກເອົາ ການເປັນພະຍານບໍ່ຈິງ ການເວົ້າ
ໝິ່ນປະມາດ
15:20 ສິ່ງແນວໝູ່ນີ້ເນາະ ເປັນແນວທີ່ເຮັດໃຫ້ຄົນເປັນມົນທິນ ແຕ່ວ່າການກິນໂດຍ
ບໍ່ລ້າງມືກ່ອນ ສໍ່ານີ້ບໍ່ໄດ້ເຮັດໃຫ້ຄົນເປັນມົນທິນດອກ”
15:21 ເວົ້າແລ້ວ ພຣະເຢຊູ ໄດ້ອອກຈາກໝ້ອງນັ້ນ ເຂົ້າໄປທາງເຂດເມືອງ ຕີເຣ ກັບ
ເມືອງ ຊີໂດນ
15:22 ແລ້ວນີ້ແຫລະ ມີຍິງຊາວ ການາອານ ຄົນໜຶ່ງມາຈາກເຂດແດນນັ້ນ ຮ້ອງ
ວອນຂໍເພິ່ນວ່າ “ໂອ້ ພຣະເຢຊູ ຜູ້ເພິ່ນເປັນລູກ ດາວິດ ເຈົ້າຂ້າ ຂໍກະລຸນາເມດຕາ
ຜູ້ຂ້າທ້ອນ ຄືລູກສາວຂອງຜູ້ຂ້າຖືກຜີເຂົ້າຄອບງໍາໄວ້ຢູ່ ເປັນທຸກເປັນຍາກຫລາຍ
ຂະໜາດ”
15:23 ສ່ວນ ພຣະເຢຊູ ກໍບໍ່ໄດ້ຕອບເຂົາຈັກຄໍາເລີຍ ຝ່າຍພວກລູກສິດຂອງເພິ່ນໄດ້
ຂໍນໍາເພິ່ນວ່າ “ໄລ່ນາງນີ້ອອກໄປຊະ ຍ້ອນເຂົາມີແຕ່ຮ້ອງແບບນີ້ຕາມພວກເຮົາ
ມາ”
15:24 ແຕ່ ພຣະເຢຊູ ຕອບວ່າ “ເຮົາບໍ່ໄດ້ຮັບການໃຊ້ມາເພື່ອຫາຊາດອື່ນໆ ນອກ
ຈາກແກະຫລົງທາງຂອງພີ່ນ້ອງຊາວ ອິສະຣາເອນ ເທົ່ານັ້ນ”
15:25 ຝ່າຍແມ່ຍິງນັ້ນກໍມາຂາບມາໄຫວ້ ພຣະເຢຊູ ເວົ້າວ່າ “ທ່ານເຈົ້າຂ້າ ຂໍຊ່ອຍ
ຜູ້ຂ້າແໜ່ທ້ອນ”
15:26 ແຕ່ເພິ່ນຕອບນາງວ່າ “ມັນບໍ່ສົມຄວນແລ້ວ ທີ່ຊິເອົາແນວກິນຂອງລູກໆ ໂຍນ
ລົງໃຫ້ໝາກິນດອກ”
15:27 ແລ້ວແມ່ຍິງນັ້ນຕອບຮັບວ່າ “ແມ່ນຄວາມຢູ່ ທ່ານເຈົ້າຂ້າ ແຕ່ຕາມຫລັກແລ້ວ
ໝາກິນເສດເຫລືອທີ່ຕົກຈາກໂຕະຂອງນາຍເຮືອນບໍ່ແມ່ນຕີ້”
15:28 ບັດນີ້ ພຣະເຢຊູ ຕອບນາງວ່າ “ໂອ້ ຍິງເອີຍ ເຈົ້າມີຄວາມເຊື່ອຫລາຍອີຫລີ
ໃຫ້ເປັນໄປຕາມຄວາມປາດຖະໜາຂອງນາງເດີ້” ແລ້ວລູກສາວຂອງນາງໄດ້ເຊົາ
ເປັນດີແຕ່ໂມງນັ້ນມາ

15:29 ແລ້ວ ພຣະເຢຊູ ໄດ້ອອກຈາກໜ້ອງນັ້ນ ມາທາງທະເລ ກາລີເລ ແລ້ວຂຶ້ນໄປ
ເທິງພູເຂົາ ນັ່ງລົງຢູ່ຫັ້ນ
15:30 ແລ້ວມີຄົນຫລວງຫລາຍໄດ້ມາຫາເພິ່ນ ໄດ້ພາຄົນເປ້ຍ ຄົນຕາບອດ ຄົນປາກ
ກືກ ຄົນພິການ ກັບເປັນແນວອື່ນໆ ອີກຫລາຍແນວ ມາວາງລົງຕໍ່ໜ້າ ພຣະເຢຊູ
ແລ້ວເພິ່ນໄດ້ປົວເຂົາໃຫ້ເຊົາເປັນດີໝົດ
15:31 ພວກຄົນຢູ່ຫັ້ນຈັ່ງແປກໃຈເປັນຕາງຶດຫລາຍບັດເຫັນຄົນປາກກືກເວົ້າໄດ້ ຄົນ
ພິການເຊົາເປັນຄົນແຂງແຮງດີ ຄົນເປ້ຍຍ່າງໄດ້ສະບາຍ ຄົນຕາບອດເຫັນໄດ້
ແລ້ວເຂົາຈັ່ງສັນລະເສີນພຣະເຈົ້າຂອງຊົນຊາດ ອິສະຣາເອນ ນັ້ນ
15:32 ສ່ວນ ພຣະເຢຊູ ກໍເອີ້ນພວກລູກສິດຂອງເພິ່ນມາບອກວ່າ “ເຮົາອີຕົນຄົນ
ຫລວງຫລາຍພວກນີ້ ຍ້ອນເຂົາຕິດຕາມເຮົາມາຮອດສາມມື້ແລ້ວ ແລ້ວເຂົາບໍ່ມີ
ແນວຊິກິນ ເຮົາເລີຍບໍ່ຢາກສົ່ງເຂົາເມືອບັດຍັງອຶດຫິວ ຢ້ານວ່າເຂົາຊິໝົດແຮງ
ຕາມທາງ”
15:33 ພວກລູກສິດເລີຍເວົ້າກັບເພິ່ນວ່າ “ໃນຖິ່ນແຫ້ງແລ້ງນີ້ ພວກຜູ້ຂ້າຊິຫາແນວ
ກິນຢູ່ໃສ ພໍຊິລ້ຽງຄົນຫລາຍຂະໜາດນີ້ໃຫ້ອີ່ມໄດ້”
15:34 ແລ້ວ ພຣະເຢຊູ ເລີຍຖາມເຂົາວ່າ “ເຈົ້າມີເຂົ້າຈີ່ຈັກກ້ອນ” ເຂົາຕອບວ່າ “ມີຢູ່
ເຈັດກ້ອນ ກັບປານ້ອຍສອງສາມໂຕ”
15:35 ແລ້ວເພິ່ນກໍສັ່ງໃຫ້ພວກຄົນຫລວງຫລາຍນັ່ງລົງກັບພື້ນດິນ
15:36 ແລ້ວເພິ່ນຮັບເອົາເຂົ້າຈີ່ເຈັດກ້ອນກັບປານັ້ນຂຶ້ນມາຂອບຄຸນ *ພຣະເຈົ້າ* ແລ້ວ
ຈັ່ງບິອອກເປັນທ່ອນໆ ສົ່ງໃຫ້ພວກລູກສິດຂອງເພິ່ນ ພວກລູກສິດກໍເລີຍແຈກໃຫ້
ຄົນທັງຫລາຍຢູ່ຫັ້ນ
15:37 ແລ້ວພວກເຂົາໄດ້ກິນອີ່ມໝົດຄູ່ຄົນ ແນວກິນທີ່ເຫລືອຢູ່ຫັ້ນ ເຂົາເກັບໄດ້ເຈັດ
ກະບຸງເຕັມ
15:38 ແລ້ວຈຳນວນຄົນທີ່ໄດ້ກິນນັ້ນ ນອກຈາກແມ່ຍິງກັບພວກເດັກ ມີຜູ້ຊາຍປະ-
ມານສີ່ພັນຄົນ
15:39 ແລ້ວພໍເພິ່ນໄດ້ສົ່ງຄົນຫລວງຫລາຍພວກນັ້ນອອກໄປແລ້ວ ຈັ່ງລົງເຮືອມາຍັງ
ຝັ່ງເຂດເມືອງ ມັກດາລາ

# ມັດທາຍ ບົດທີ 16

16:1 ບັດນີ້ ພວກ ຟາຣີຊາຍ ກັບພວກ ຊາດູກາຍ ໄດ້ມາຫາ ຢາກທົດລອງ ພຣະເຢ-
ຊູ ຈັ່ງແກ້ງຂໍໃຫ້ເພິ່ນສະແດງເຄື່ອງໝາຍສຳຄັນຈາກຟ້າສະຫວັນໃຫ້ເຂົາເຫັນ
16:2 ພຣະເຢຊູ ຕອບເຂົາວ່າ "ພໍຮອດຄ່ຳພວກເຈົ້າເວົ້າກັນວ່າ 'ມື້ອື່ນອາກາດຊິ
ສົດໃສດີຍ້ອນທ້ອງຟ້າສີແດງ'
16:3 ແລ້ວໃນຍາມເຊົ້າພວກເຈົ້າເວົ້າວ່າ 'ມື້ນີ້ຊິເກີດພາຍຸຝົນຍ້ອນທ້ອງຟ້າແດງຄຶ້ມ
ໆ' ໂອ້ ພວກໜ້າຊື່ໃຈຄົດເອີຍ ພວກເຈົ້າສາມາດອ່ານທ້ອງຟ້າອອກໄດ້ ແຕ່
ເຄື່ອງໝາຍສຳຄັນຂອງການເວລາ ພວກເຈົ້າບໍ່ສາມາດອ່ານອອກຊັ່ນບໍ້
16:4 ພວກຊາດຊົ່ວທີ່ຫລິ້ນຊູ້ *ນອກໃຈພຣະເຈົ້າ* ຊອກຫາແຕ່ເຄື່ອງໝາຍສຳຄັນ ແຕ່
ຊິບໍ່ມີໃຫ້ເຂົາດອກ ເວັ້ນແຕ່ເຄື່ອງໝາຍສຳຄັນຂອງ ໂຢນາ ເທົ່ານັ້ນ ຜູ້ເປັນປາກ-
ເປັນສຽງຂອງພຣະເຈົ້າ" ເວົ້າແລ້ວ ພຣະເຢຊູ ກໍອອກຈາກເຂົາໄປ
16:5 ຝ່າຍພວກລູກສິດຂອງເພິ່ນ ບັດຂ້າມຟາກນັ້ນແລ້ວກໍຮູ້ເມື່ອໂຕວ່າໄດ້ລືມເອົາ
ເຂົ້າຈີ່ໄປນຳ
16:6 ພຣະເຢຊູ ເວົ້າກັບເຂົາວ່າ "ໃຫ້ສັງເກດກັບຄອຍຖ້າລະວັງເຊື້ອຟູຂອງພວກ
ຟາຣີຊາຍ ກັບພວກ ຊາດູກາຍ ໃຫ້ດີໆ ເດີ້"
16:7 ບັດນີ້ພວກລູກສິດຈັ່ງງຶງປຶກສາກັນວ່າ "ເປັນຍ້ອນເຮົາລືມເອົາເຂົ້າຈີ່ນັ້ນມາບໍ້"
16:8 ສ່ວນ ພຣະເຢຊູ ກໍຮູ້ຈັກຄວາມເວົ້າຂອງເຂົາຈັ່ງບອກເຂົາວ່າ "ໂອ້ ຜູ້ມີຄວາມ-
ເຊື່ອນ້ອຍ ເປັນຫຍັງຈັ່ງເວົ້າກັນແຕ່ເລື່ອງການບໍ່ເອົາເຂົ້າຈີ່ມາ
16:9 ພວກເຈົ້າຍັງບໍ່ທັນເຂົ້າໃຈບໍ້ ຈື່ບໍ່ໄດ້ບໍ້ ເລື່ອງເຂົ້າຈີ່ຫ້າກ້ອນກັບຫ້າພັນຄົນນັ້ນ
ພວກເຈົ້າໄດ້ເກັບອັນທີ່ເຫລືອຢູ່ໄດ້ຈັກກະບຸງ
16:10 ກັບເຂົ້າຈີ່ເຈັດກ້ອນກັບສີ່ພັນຄົນນັ້ນ ພວກເຈົ້າໄດ້ເກັບອັນທີ່ເຫລືອຢູ່ໄດ້ຈັກ
ກະບຸງ
16:11 ເປັນຈັ່ງໃດພວກເຈົ້າເຖິງບໍ່ເຂົ້າໃຈເລີຍ ວ່າເຮົາບໍ່ໄດ້ເວົ້າກັບພວກເຈົ້າເລື່ອງ
ເຂົ້າຈີ່ດອກ ແຕ່ໄດ້ເຕືອນໃຫ້ພວກເຈົ້າລະວັງເຊື້ອຟູຂອງພວກ ຟາຣີຊາຍ ກັບ
ພວກ ຊາດູກາຍ ໃຫ້ດີ"

16:12 ພໍເພິ່ນເວົ້າແລ້ວ ພວກລູກສິດກໍນຶກອອກເຂົ້າໃຈໄດ້ວ່າ ເພິ່ນເຕືອນໃຫ້ລະວັງ
ຫລັກຄຳສອນຂອງພວກ ຟາຣີຊາຍ ກັບພວກ ຊາດູກາຍ ບໍ່ແມ່ນໃຫ້ລະວັງເຊື້ອຟູ
ເຂົ້າຈີ່
16:13 ບັດພໍ ພຣະເຢຊູ ເຂົ້າໄປໃນເຂດເມືອງ ກາຍຊາເຣຍ ຂອງ ຟີລິບປອຍ ເພິ່ນ
ຈັ່ງຖາມພວກລູກສິດຂອງເພິ່ນວ່າ “ຄົນເວົ້າກັນວ່າ ເຮົາຜູ້ເປັນບຸດມະນຸດ ເປັນໃຜ”
16:14 ລູກສິດຕອບວ່າ “ຜູ້ລາງຄົນວ່າເປັນ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນໍ້າ ແຕ່ຜູ້ລາງຄົນ
ວ່າເປັນ ເອລີຢາ ແລ້ວອີກຜູ້ລາງຄົນວ່າເປັນ ເຢເຣມີຢາ ຫລືລາງເທື່ອເປັນຄົນໆ
ໜຶ່ງໃນພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ”
16:15 ພຣະເຢຊູ ຖາມເຂົາວ່າ “ແລ້ວພວກເຈົ້າເດ ພວກເຈົ້າວ່າເຮົາເປັນໃຜສັ່ນ”
16:16 ຊີໂມນເປໂຕ ກໍເວົ້າຂຶ້ນວ່າ “ທ່ານເປັນ ພຣະຄຣິດ ພຣະບຸດ ຂອງພຣະເຈົ້າ
ທີ່ດຳລົງຢູ່”
16:17 ພຣະເຢຊູ ຕອບເຂົາວ່າ “ ຊີໂມນ ລູກ ໂຢນາ ເອີຍ ເຈົ້າກໍໄດ້ພົບເປັນສຸກ
ແລ້ວ ຍ້ອນວ່າເນື້ອໜັງກັບເລືອດບໍ່ໄດ້ເປີດເຜີຍຄວາມຈິງນີ້ໃຫ້ເຈົ້າດອກ ແຕ່
ພຣະເຈົ້າຕ່າງຫາກ ຜູ້ເປັນພໍ່ຂອງເຮົາ ຜູ້ເພິ່ນສະຖິດໃນສະຫວັນ ເພິ່ນກໍໄດ້ເຜີຍ
ໃຫ້ເຈົ້າຮູ້ຈັກ
16:18 ແລ້ວເຮົາກໍບອກເຈົ້າອີກວ່າ ເຈົ້າຄື ເປໂຕ ແລ້ວເຮົາຊິສ້າງກຸ່ມຜູ້ເຊື່ອຂອງ
ເຮົາໄວ້ເທິງສີລານີ້ ແລ້ວປະຕູນະລົກຊິບໍ່ສາມາດມີໄຊຕໍ່ກຸ່ມຜູ້ເຊື່ອນັ້ນໄດ້ເລີຍ
16:19 ແລ້ວເຮົາຊິມອບພວງລູກກຸນແຈຂອງລາຊະອານາຈັກສະຫວັນໄວ້ໃຫ້ພວກ
ເຈົ້າ ແລ້ວແນວໃດຊຶ່ງພວກເຈົ້າຕົກລົງຊິຜູກມັດໄວ້ໃນໂລກນີ້ ກໍຊິຖືກຜູກມັດໄວ້
ໃນສະຫວັນນຳ ກັບແນວໃດຊຶ່ງພວກເຈົ້າຕົກລົງຊິປົດປ່ອຍອອກໃນໂລກນີ້ ກໍຊິ
ຖືກປົດປ່ອຍໃນສະຫວັນຄືກັນ”
16:20 ແລ້ວເພິ່ນໄດ້ສັ່ງຫ້າມພວກລູກສິດຂອງເພິ່ນໄວ້ ບໍ່ໃຫ້ບອກຜູ້ໃດວ່າ ເພິ່ນເປັນ
ພຣະເຢຊູ ຊຶ່ງເປັນ ພຣະຄຣິດ ນັ້ນ
16:21 ຕັ້ງແຕ່ຍາມນັ້ນມາ ພຣະເຢຊູ ໄດ້ຕັ້ງຕົ້ນເລີ່ມເຜີຍໃຫ້ພວກລູກສິດຂອງເພິ່ນ
ຮູ້ຈັກວ່າ ເພິ່ນຊິຕ້ອງໄປເມືອງ ເຢຣູຊາເລັມ ແລ້ວຊິຕ້ອງທົນທຸກທໍລະມານຫລາຍ

ອັນຫລາຍແນວ ຈາກພວກຜູ້ຫລັກຜູ້ໃຫຍ່ ກັບພວກຫົວໜ້າປະໂລຫິດ ກັບພວກ
ນັກທຳເຖິງຖືກປະຫານຊີວິດ ແລ້ວໃນມື້ທີ່ສາມຊິໄດ້ເປັນຂຶ້ນມາຈາກຕາຍ
16:22 ບັດນີ້ພໍຟັງແລ້ວ ເປໂຕ ກໍນຳ ພຣະເຢຊູ ອອກໄປຈັກນ້ອຍເວົ້າກັນເປັນສ່ວນ
ໂຕ ທ້ວງເພິ່ນວ່າ “ທ່ານເຈົ້າຂ້າ ຂໍຢ່າໃຫ້ເປັນຈັ່ງຊັ້ນເລີຍ ຢ່າໃຫ້ເຫດຮ້າຍນັ້ນເປັນ
ໄປນຳທ່ານເດີ້”
16:23 ແຕ່ ພຣະເຢຊູ ຫັນໜ້າມາເວົ້າຢ່າງແຮງກັບ ເປໂຕ ວ່າ “ໄປໃຫ້ພົ້ນ ອ້າຍຜີ-
ພະຍາມານຊາຕານ ເຈົ້າຜູ້ເປັນອຸປະສັກທີ່ຂວາງທາງເຮົາໄວ້ ຍ້ອນວ່າເຈົ້າບໍ່ໄດ້
ຄຶດຄືກັນກັບພຣະເຈົ້າ ແຕ່ຄຶດຄືກັນກັບຄົນທຳມະດາໂລກຊື່ໆ”
16:24 ຍາມນັ້ນ ພຣະເຢຊູ ຈັ່ງເວົ້າກັບພວກລູກສິດຂອງເພິ່ນວ່າ “ຄັ່ນຜູ້ໃດຢາກຕາມ
ເຮົາມາ ໃຫ້ຜູ້ນັ້ນປະຕິເສດຄວາມປາດຖະໜາຂອງໂຕເອງ ແລ້ວຮັບເອົາໄມ້ກາງ-
ແຂນຂອງໂຕແບກຕາມເຮົາມາ
16:25 ຄື ຜູ້ໃດຄຶດຢາກຊິເອົາຊີວິດຂອງໂຕເອງລອດ ຊີວິດຂອງຜູ້ນັ້ນຊິສູນເສຍໄປ
ແຕ່ຜູ້ໃດສະລະຊີວິດໂຕເອງຍ້ອນເຫັນແກ່ເຮົາ ຜູ້ນັ້ນຊິໄດ້ຊີວິດລອດ
16:26 ຄື ຄັ່ນຜູ້ໃດຊິໄດ້ສິ່ງຂອງທັງໝົດຂອງໂລກ ແຕ່ໃນສຸດທ້າຍຈິດວິນຍານຂອງ-
ໂຕເອງຊິຕ້ອງສູນເສຍໄປ ຜູ້ນັ້ນຊິໄດ້ປະໂຫຍດອີຫຍັງ ຫລືວ່າ ຜູ້ນັ້ນຊິເອົາອີຫຍັງ
ໄປແລກເອົາຈິດວິນຍານຂອງໂຕເອງໃຫ້ລອດ
16:27 ໂດຍວ່າ ເຮົາຜູ້ເປັນບຸດມະນຸດ ຊິມາດ້ວຍສະຫງ່າລາສີອັນຮຸ່ງເຮືອງຂອງ
ພຣະເຈົ້າຜູ້ເປັນພໍ່ ພ້ອມດ້ວຍໝູ່ເທວະທູດທັງຫລາຍອັນມີລິດຂອງເພິ່ນ ໃນຍາມ
ນັ້ນເຮົາຊິມອບບຳເໜັດລາງວັນໃຫ້ຄູ່ຄົນຕາມການງານທີ່ເຂົາໄດ້ເຮັດ
16:28 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ໃນພວກເຈົ້າທີ່ຢືນຢູ່ນີ້ ມີຜູ້ລາງ
ຄົນຊິບໍ່ຊິມຄວາມຕາຍ ຈົນກວ່າຊິໄດ້ເຫັນເຮົາຜູ້ເປັນບຸດມະນຸດລົງມາສູ່ລາຊະ-
ອານາຈັກຂອງເພິ່ນ”

## ມັດທາຍ ບົດທີ 17

17:1 ແລ້ວພໍຢູ່ມາອີກຫົກມື້ ພຣະເຢຊູ ໄດ້ພາ ເປໂຕ ຢາໂກໂບ ກັບ ໂຢຮັນ ນ້ອງ-
ຊາຍຂອງ ຢາໂກໂບ ນັ້ນ ຂຶ້ນພູເຂົາສູງໆ ໄປໜ້ອງບໍ່ມີຄົນຢູ່

17:2 ພໍຮອດແລ້ວ ໂຕຂອງເພິ່ນກໍປ່ຽນສະພາບຕໍ່ໜ້າຕໍ່ຕາເຂົາ ໜ້າຂອງເພິ່ນກໍ
ອອກແສງຈ້າຄືຕະເວັນ ແລ້ວເສື້ອຄຸມຂອງເພິ່ນກໍຂາວແທ້ຄືແສງສະຫວ່າງ
17:3 ແລ້ວນີ້ແຫລະ ໂມເຊ ກັບ ເອລີຢາ ກໍມາປາກົດຢູ່ຕໍ່ໜ້າເຂົາ ພວມເວົ້າຢູ່ກັບ
ເພິ່ນ
17:4 ສ່ວນ ເປໂຕ ໄດ້ເວົ້າກັບ ພຣະເຢຊູ ວ່າ “ທ່ານເຈົ້າຂ້າ ມັນກໍດີຫລາຍທີ່ພວກຜູ້-
ຂ້າຢູ່ນີ້ນໍາ ຄັນທ່ານຕ້ອງການ ພວກຜູ້ຂ້າຊິເຮັດຕູບສາມຫລັງໄວ້ຢູ່ພີ້ ສໍາລັບທ່ານ
ຫລັງໜຶ່ງ ສໍາລັບ ໂມເຊ ຫລັງໜຶ່ງ ສໍາລັບ ເອລີຢາ ຫລັງໜຶ່ງ”
17:5 ພໍ ເປໂຕ ເວົ້າຍັງບໍ່ທັນຂາດຄໍາ ນີ້ແຫລະ ມີເມກຊຶ່ງສະຫວ່າງຈ້າມາປົກພວກ-
ເຂົາໄວ້ ແລ້ວນີ້ແຫລະ ມີສຽງຂອງຜູ້ມີອໍານາດເວົ້າອອກມາຈາກເມກນັ້ນວ່າ “ຜູ້ນີ້
ເປັນລູກທີ່ຮັກແພງຂອງເຮົາ ເຮົາພໍໃຈໃນຜູ້ນີ້ຫລາຍ ໃຫ້ຟັງເພິ່ນເອົາເດີ້”
17:6 ຝ່າຍພວກລູກສິດ ບັດໄດ້ຍິນຈັ່ງຊີ້ກໍເກີດຢ້ານຫລາຍຈົ່ງຂາບລົງຈໍາດິນ
17:7 ແລ້ວ ພຣະເຢຊູ ມາເອົາມືແຕະພວກເຂົາ ແລ້ວເວົ້າວ່າ “ໃຫ້ລຸກຂຶ້ນຊະ ຢ່າສູ່-
ຢ້ານເລີຍ”
17:8 ແລ້ວບັດພວກເຂົາເງີຍໜ້າຂຶ້ນເບິ່ງ ກໍບໍ່ໄດ້ເຫັນໃຜ ເຫັນແຕ່ ພຣະເຢຊູ ເທົ່າ-
ນັ້ນ
17:9 ແລ້ວບັດພວມລົງມາຈາກພູເຂົານັ້ນ ພຣະເຢຊູ ບອກພວກລູກສິດໄວ້ວ່າ “ນິ-
ມິດທີ່ພວກເຈົ້າໄດ້ເຫັນນີ້ ຢ່າສູ່ບອກຜູ້ໃດເລີຍ ຈົນກວ່າເຮົາຜູ້ເປັນບຸດມະນຸດຊິ
ເປັນຂຶ້ນມາຈາກຕາຍ”
17:10 ພວກລູກສິດກໍເລີຍຖາມເພິ່ນວ່າ “ເປັນຫຍັງພວກນັກທໍາຈັ່ງເຫັນວ່າ ຈໍາເປັນ
ເອລີຢາ ຊິຕ້ອງມາກ່ອນ”
17:11 ພຣະເຢຊູ ຕອບເຂົາວ່າ “ ເອລີຢາ ຕ້ອງມາກ່ອນກໍແມ່ນຢູ່ ແລ້ວ ລາວ ຊິເຮັດ
ໃຫ້ໝົດຄູ່ອັນຄູ່ແນວກັບຄືນສູ່ສະພາບເດີມ
17:12 ແຕ່ເຮົາບອກພວກເຈົ້າວ່າ ເອລີຢາ ນັ້ນໄດ້ມາຮອດແລ້ວ ແລ້ວພວກເຂົາບໍ່ຮູ້-
ຈັກ ລາວ ແຕ່ເຂົາໄດ້ເຮັດໃສ່ ລາວ ຕາມໃຈມັກຂອງເຂົາ ແລ້ວພວກເຂົາກໍຊິເຮັດ
ໃສ່ເຮົາຜູ້ເປັນບຸດມະນຸດຕາມໃຈມັກຄືກັນ”

17:13 ບັດນີ້ພວກລູກສິດເຂົ້າໃຈວ່າ ພຣະເຢຊູ ໄດ້ເວົ້າກັບເຂົາເວົ້າເຖິງ ໂຢຮັນ ຜູ້ໃຫ້
ຮັບພິທີຈຸ່ມນ້ຳນັ້ນ
17:14 ແລ້ວບັດ ພຣະເຢຊູ ກັບພວກລູກສິດມາເຖິງໝູ່ຄົນຫລວງຫລາຍແລ້ວ ມີຜູ້-
ຊາຍຄົນໜຶ່ງມາຫາເພິ່ນ ຄຸກເຂົ່າລົງເວົ້ານຳເພິ່ນວ່າ
17:15 “ທ່ານເຈົ້າຂ້າ ຂໍເມດຕາລູກຊາຍຂອງຜູ້ຂ້າທ້ອນ ຄືເຂົາເສຍຈະລິດເປັນບ້າ
ແລ້ວ ເປັນທຸກເປັນຍາກຫລາຍຂະໜາດ ລາງເທື່ອກໍຕົກໃສ່ໄຟ ລາງເທື່ອກໍຕົກນ້ຳ
17:16 ຜູ້ຂ້າໄດ້ພາເຂົາມາຫາພວກລູກສິດຂອງທ່ານ ແຕ່ລູກສິດປົວບໍ່ໄດ້”
17:17 ພຣະເຢຊູ ຕອບວ່າ “ໂອ້ ຄົນຊົ່ວຊ້າເລວຊາມໃນຍຸກທີ່ຂາດຄວາມເຊື່ອແທ້
ເຮົາຊິຕ້ອງຢູ່ກັບພວກເຈົ້າດົນນານອີກສ່ຳໃດ ແລ້ວຊິຕ້ອງທົນເອົາພວກເຈົ້ານີ້ໄປ
ຮອດໃສ ໃຫ້ນຳເດັກນັ້ນມາຫາເຮົາເດີ້”
17:18 ແລ້ວ ພຣະເຢຊູ ໄດ້ສັ່ງຜີນັ້ນໃຫ້ອອກຈາກເຂົາໄປ ມັນກໍອອກ ໂລດ ແລ້ວ
ເດັກກໍເຊົາເປັນດີໃນຍາມນັ້ນເລີຍ
17:19 ຫລັງຈາກນັ້ນ ພວກລູກສິດມາຫາ ພຣະເຢຊູ ຖາມເປັນສ່ວນໂຕວ່າ “ເປັນ
ຫຍັງພວກຜູ້ຂ້າຂັບໄລ່ຜີນັ້ນອອກບໍ່ໄດ້”
17:20 ແລ້ວ ພຣະເຢຊູ ຕອບເຂົາວ່າ “ເປັນຍ້ອນຄວາມບໍ່ເຊື່ອຂອງພວກເຈົ້າ ເຮົາກໍ
ຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າຄັ່ນພວກເຈົ້າມີຄວາມເຊື່ອພຽງສ່ຳເມັດ
ຜັກກາດເມັດດຽວ ເຈົ້າຊິສັ່ງພູເຂົານີ້ ‘ໃຫ້ຍົກຍ້າຍຈາກໜ້ອງນີ້ໄປໜ້ອງພູ້ນເດີ້’
ແລ້ວມັນກໍຊິຕ້ອງຍົກຍ້າຍໄປ ໂລດ ແລ້ວຊິບໍ່ມີອີຫຍັງທີ່ຊິເປັນໄປບໍ່ໄດ້ສຳລັບ
ພວກເຈົ້າເລີຍ
17:21 ແຕ່ຜີແບບນີ້ຊິບໍ່ອອກ ເວັ້ນແຕ່ໂດຍການອະທິຖານເວົ້ານຳພຣະເຈົ້າ ກັບ
ການອົດເຂົ້າປາອາຫານ”
17:22 ແລ້ວຍາມທີ່ ພຣະເຢຊູ ກັບພວກລູກສິດຢູ່ໃນແຄວັນ ກາລີເລ ເພິ່ນໄດ້ບອກ
ເຂົາວ່າ “ເຮົາຜູ້ເປັນບຸດມະນຸດຊິຕ້ອງຖືກທໍລະຍົດມອບໄວ້ໃນເນື້ອມືຂອງຄົນ
17:23 ແລ້ວພວກເຂົາຊິປະຫານຊີວິດຂອງເຮົາ ແຕ່ໃນມື້ທີ່ສາມເຮົາຊິເປັນຂຶ້ນມາໃ
ໝ່” ພໍຟັງແລ້ວພວກລູກສິດກໍເສົ້າໃຈຫລາຍ

17:24 ແລ້ວບັດ ພຣະເຢຊູ ກັບພວກລູກສິດມາເຖິງເມືອງ ກາເປນາອູມ ພວກຄົນ
ເກັບເງິນຊ່ອຍບຳລຸງພຣະວິຫານ ໄດ້ມາຫາ ເປໂຕ ຖາມວ່າ “ອາຈານຂອງເຈົ້າຊິບໍ່
ເສຍຄ່າບຳລຸງພຣະວິຫານຊ່ອຍສັ່ນບໍ້”
17:25 ເປໂຕ ຕອບພວກເຂົາວ່າ “ເສຍຢູ່” ແລ້ວພໍ ເປໂຕ ເຂົ້າໄປໃນເຮືອນ ພຣະ-
ເຢຊູ ກໍເວົ້າຂຶ້ນກ່ອນໂດຍຖາມລາວວ່າ “ ຊີໂມນ ເອີຍ ເຈົ້າຄຶດເຫັນຈັ່ງໃດ ພວກ
ກະສັດທາງແຜ່ນດິນໂລກນີ້ເຄີຍເກັບພາສີກັບຄ່າສ່ວຍຈາກໃຜ ເຂົາເກັບຈາກ
ລາດຊະດອນໃນລາຊະອານາຈັກຂອງພວກເຂົາເອງຫລືຈາກຄົນຢູ່ພາຍນອກ”
17:26 ເປໂຕ ຕອບ ພຣະເຢຊູ ວ່າ “ເກັບຈາກຄົນຢູ່ພາຍນອກ” ພຣະເຢຊູ ຈັ່ງບອກ
ເຂົາວ່າ “ຄັ່ນຈັ່ງຊັ້ນລູກໆ ຂອງກະສັດກໍອິດສະຫລະບໍ່ຕ້ອງເສຍ
17:27 ຈັ່ງໃດກໍຕາມ ເພື່ອໝູ່ເຮົາຊິບໍ່ເປັນອຸປະສັກໃຫ້ພວກເຂົາສະດຸດໃຈ ໃຫ້ເຈົ້າ
ໄປຕົກເບັດຢູ່ທະເລ ບັດໄດ້ປາໂຕທຳອິດກໍໃຫ້ເປີດປາກຂອງມັນ ແລ້ວຊິເຫັນເງິນ
ຫລຽນໜຶ່ງ ໃຫ້ເອົາເງິນນັ້ນໄປຈ່າຍພວກເຂົາ ບອກວ່າມາຈາກເຈົ້າກັບເຮົາກໍເພື່ອ
ຊ່ອຍບຳລຸງວິຫານເດີ້”

## ມັດທາຍ ບົດທີ 18

18:1 ໃນຍາມນັ້ນພໍດີ ພວກລູກສິດມາຫາ ພຣະເຢຊູ ເວົ້າວ່າ “ຊ່ອຍບອກແໜ່ ແມ່ນ
ໃຜຊິເປັນໃຫຍ່ໃນລາຊະອານາຈັກສະຫວັນນັ້ນ”
18:2 ແລ້ວ ພຣະເຢຊູ ໄດ້ເອີ້ນເດັກນ້ອຍມາຄົນໜຶ່ງ ໃຫ້ໄປຢືນຢູ່ໃນໝູ່ພວກລູກສິດ
18:3 ແລ້ວເວົ້າວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ນອກຈາກພວກ
ເຈົ້າປ່ຽນໃຈໃໝ່ ຖ່ອມໂຕລົງຄືເດັກນ້ອຍນີ້ ເຈົ້າຊິເຂົ້າໃນລາຊະອານາຈັກສະ-
ຫວັນບໍ່ໄດ້ເລີຍ
18:4 ຄື ຜູ້ໃດກໍຕາມທີ່ຖ່ອມໃຈລົງຄືເດັກນ້ອຍຄົນນີ້ ຜູ້ນັ້ນຊິເປັນໃຫຍ່ໃນລາຊະອາ-
ນາຈັກສະຫວັນ
18:5 ແລ້ວຜູ້ໃດຊິຕ້ອນຮັບເດັກນ້ອຍຄົນໜຶ່ງຄືເດັກຜູ້ນີ້ໃນນາມຂອງເຮົາ ຜູ້ນັ້ນກໍທໍ່-
ກັບຕ້ອນຮັບເຮົາ

18:6 ແຕ່ຜູ້ໃດທີ່ເປັນອຸປະສັກໃຫ້ຜູ້ນ້ອຍໆຄົນໜຶ່ງໃຫ້ຫລົງຜິດໄປໃນພວກນີ້ທີ່ເຊື່ອ
ໃນເຮົາ ຄັ້ນຊິເອົາຫີນໂມ້ກ້ອນໃຫຍ່ຜູກຄໍຜູ້ນັ້ນ ແລ້ວຖ່ວງລົງໃນທະເລໜ້ອງເລິກ
ໆ ກໍຊິດີກວ່າ
18:7 ລະວັງພິນາດເດີ້ ຄົນໂລກນີ້ ຍ້ອນການກໍ່ເຫດໃຫ້ຄົນສະດຸດຫລົງຜິດ ຄືຈຳ-
ເປັນທີ່ຊິຕ້ອງມີການສະດຸດໃຫ້ຫລົງຜິດຢູ່ແລ້ວ ແຕ່ລະວັງພິນາດເດີ້ ຜູ້ທີ່ກໍ່ເຫດນັ້ນ
18:8 ຄືກັນກັບວ່າ ຄັ້ນມືຫລືຕີນຂອງເຈົ້າເປັນອຸປະສັກໃຫ້ເຈົ້າຫລົງຜິດ ໃຫ້ຕັດອອກ
ໂຍນຖິ້ມຊະເດີ້ ຄືຊິ່ງເຈົ້າຊິໃຊ້ຊີວິດດ້ວຍມືດ້ວນຕີນດ້ວນ ກໍຊິດີກວ່າມີຄົບສອງມື
ສອງຕີນ ແລ້ວຊິຖືກຖິ້ມລົງໃນບຶງໄຟຊຶ່ງໄໝ້ຢູ່ຕະຫລອດການເປັນນິດ
18:9 ແລ້ວ ຄັ້ນວ່າຕາຂອງເຈົ້າເປັນອຸປະສັກໃຫ້ເຈົ້າຫລົງຜິດ ກໍໃຫ້ຄວັກອອກໂຍນ
ມັນຖິ້ມຊະເດີ້ ຄືຊິ່ງເຈົ້າຊິໃຊ້ຊີວິດດ້ວຍຕາຂ້າງດຽວກໍຍັງດີກວ່າມີຕາຄົບທັງສອງ
ແລ້ວຊິຖືກຖິ້ມລົງໃນບຶງໄຟຊຶ່ງໄໝ້ຢູ່ຕະຫລອດການເປັນນິດ
18:10 ໃຫ້ລະວັງໃຫ້ດີເດີ້ ຢ່າດູຖູກດູໝິ່ນຜູ້ນ້ອຍໆໃນພວກນີ້ແມ່ນແຕ່ຜູ້ດຽວ ຄືເຮົາ
ຊິບອກພວກເຈົ້າວ່າ ເທວະທູດປະຈຳໂຕຂອງຜູ້ນ້ອຍໆຢູ່ເທິງສະຫວັນນັ້ນ ໄດ້
ເຫັນໜ້າຂອງພຣະເຈົ້າຢູ່ສະເໝີ ຜູ້ເພິ່ນຊຶ່ງເປັນພໍ່ຂອງເຮົາຢູ່ໃນສະຫວັນ
18:11 ຄືເຮົາຜູ້ເປັນບຸດມະນຸດໄດ້ມາເພື່ອຊ່ອຍຜູ້ຊຶ່ງຫລົງທາງໄປຫັ້ນໃຫ້ລອດພົ້ນ
18:12 ພວກເຈົ້າຄຶດເຫັນຈັ່ງໃດ ຄັ້ນຜູ້ໜຶ່ງມີແກະຢູ່ຮ້ອຍໂຕ ກັບໂຕໜຶ່ງຫລົງທາງ
ຈາກຝູງເຮ່ຍໄປ ບໍ່ແມ່ນຜູ້ນັ້ນຊິບໍ່ປະແກະເກົ້າສິບເກົ້າໂຕໄວ້ບໍ້ ແລ້ວຂຶ້ນໄປເທິງ
ພູເຂົາຊອກຫາໂຕທີ່ເຮ່ຍໄປຫັ້ນ
18:13 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ຄັ້ນເປັນວ່າເຂົາໄດ້ຮັບ ເຂົາກໍຊິ
ຊື່ນຊົມຍິນດີໃນແກະໂຕນັ້ນ ຫລາຍກວ່າແກະເກົ້າສິບເກົ້າໂຕທີ່ບໍ່ໄດ້ຫລົງເຮ່ຍໄປ
18:14 ໃນທຳນອງດຽວກັນ ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ເພິ່ນສະຖິດໃນສະຫວັນ
ເພິ່ນບໍ່ຢາກໃຫ້ຜູ້ນ້ອຍໆໃນພວກນີ້ພິນາດໄປ ແມ່ນແຕ່ຄົນດຽວເລີຍ
18:15 ຫລາຍກວ່ານັ້ນອີກ ຄັ້ນພີ່ນ້ອງຜູ້ໜຶ່ງຂອງເຈົ້າເຮັດຜິດຕໍ່ເຈົ້າ ໃຫ້ໄປບອກເຂົາ
ເຖິງຄວາມຜິດນັ້ນສອງຕໍ່ສອງເທົ່ານັ້ນ ຄັ້ນເຂົາຮັບຟັງເຈົ້າ ເຈົ້າຊິໄດ້ພີ່ນ້ອງຄືນມາ
18:16 ແຕ່ຄັ້ນວ່າ ເຂົາບໍ່ຍອມຮັບຟັງເຈົ້າ ກໍໃຫ້ນຳຄົນໜຶ່ງຫລືສອງຄົນໄປນຳ ໃຫ້-
ເປັນພະຍານສອງສາມປາກ ເພື່ອຄູ່ຄຳຊິເປັນຫຼັກຖານໄດ້

18:17 ແລ້ວຄັ່ນວ່າ ເຂົາຍັງບໍ່ຍອມຟັງຄົນພວກນັ້ນ ໃຫ້ໄປແຈ້ງເລື່ອງຄວາມຜິດນັ້ນ
ຕໍ່ໜ້າກຸ່ມຜູ້ເຊື່ອ ແຕ່ຄັ່ນວ່າເຂົາຍັງບໍ່ຟັງກຸ່ມຜູ້ເຊື່ອອີກກໍໃຫ້ຖືວ່າ ເຂົາຄືຄົນຕ່າງ-
ຊາດທີ່ບໍ່ຮູ້ຈັກພຣະເຈົ້າກັບຄົນເກັບພາສີ
18:18 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ແນວໃດຊຶ່ງພວກເຈົ້າຕົກລົງຊິ
ຜູກມັດໄວ້ໃນໂລກນີ້ ກໍຊິຖືກຜູກມັດໄວ້ໃນສະຫວັນນໍາ ກັບແນວໃດຊຶ່ງເຈົ້າຕົກລົງ
ຊິປົດປ່ອຍໃນໂລກນີ້ ກໍຊິຖືກປົດປ່ອຍໃນສະຫວັນຄືກັນ
18:19 ເຮົາຊິບອກພວກເຈົ້າຊໍ້າອີກວ່າ ຄັ່ນຊິມີສອງຄົນໃນພວກເຈົ້າຊິຮ່ວມໃຈຕົກ-
ລົງກັນຂໍ້ໃດຂໍ້ໜຶ່ງໃນໂລກນີ້ ແລ້ວຂໍຕາມແນວນັ້ນ ພຣະເຈົ້າຜູ້ເປັນພໍ່ຂອງເຮົາຜູ້
ເພິ່ນສະຖິດໃນສະຫວັນກໍຊິເຮັດໃຫ້ເຂົາ ໂລດ
18:20 ຄືວ່າ ໝ້ອງໃດທີ່ມີສອງສາມຄົນຮ່ວມກັນໃນນາມຂອງເຮົາ ເຮົາຊິຢູ່ນໍາໝູ່
ພວກເຂົາຢູ່ຫັ້ນ”
18:21 ຍາມນັ້ນ ເປໂຕ ມາເວົ້າກັບ ພຣະເຢຊູ ວ່າ “ທ່ານເຈົ້າຂ້າ ພີ່ນ້ອງຂອງຜູ້ຂ້າຊິ
ເຮັດຜິດຕໍ່ຜູ້ຂ້າຈັກເທື່ອ ຜູ້ຂ້າຈັ່ງຊິຕ້ອງຍົກຄວາມຜິດໃຫ້ເຂົາ ຮອດເຈັດເທື່ອບໍ້”
18:22 ພຣະເຢຊູ ຕອບເຂົາວ່າ “ເຮົາບໍ່ວ່າພຽງເຈັດເທື່ອເທົ່ານັ້ນ ແຕ່ຮອດເຈັດສິບ
ຄູນດ້ວຍເຈັດເທື່ອ
18:23 ຈັ່ງຊັ້ນ ລາຊະອານາຈັກສະຫວັນປຽບຄືນາຍຜູ້ໜຶ່ງ ຢາກຊິຄິດບັນຊີຜູ້ຮັບໃຊ້
ຂອງເພິ່ນ
18:24 ບັດຕັ້ງຕົ້ນເລີ່ມການຄິດບັນຊີນັ້ນ ໄດ້ມີຄົນໜຶ່ງຖືກພາມາ ຊຶ່ງຜູ້ນີ້ເປັນໜີ້ກະ-
ສັດໜຶ່ງໝື່ນຕາລັນຕົນ
18:25 ຜູ້ນັ້ນບໍ່ມີເງິນຊິໃຊ້ໜີ້ໄດ້ ນາຍເຂົາຈັ່ງສັ່ງໃຫ້ເຂົາຂາຍໂຕເອງ ທັງເມຍກັບລູກ
ນໍາ ພ້ອມທັງໝົດຄູ່ອັນຄູ່ແນວທີ່ເຂົາມີຢູ່ຫັ້ນ ເອົາມາໃຊ້ໜີ້ໃຫ້ໝົດ
18:26 ລູກໜີ້ຜູ້ນັ້ນຈັ່ງກົ້ມກາບນາຍວ່າ ‘ຂ້າແຕ່ນາຍທ່ານເອີຍ ຂໍກະລຸນາອົດທົນຕໍ່
ຜູ້ຂ້າແໜ່ທ້ອນ ແລ້ວຜູ້ຂ້າຊິໃຊ້ໜີ້ນາຍທັງໝົດ’
18:27 ແລ້ວນາຍຂອງຜູ້ຮັບໃຊ້ຜູ້ນັ້ນມີໃຈເມດຕາ ເລີຍປ່ອຍເຂົາໄປ ຍົກໜີ້ໃຫ້ເຂົາ
ໝົດ

18:28 ແຕ່ຜູ້ຮັບໃຊ້ຜູ້ນັ້ນອອກໄປພົ້ໝູ່ຜູ້ຮັບໃຊ້ຜູ້ໜຶ່ງ ຊຶ່ງເປັນໜີ້ເຂົາຢູ່ໜຶ່ງຮ້ອຍເດ-
ນາຣິອົນ ຈັ່ງຈັບຄົນນັ້ນບີບຄໍວ່າ 'ໃຫ້ໃຊ້ໜີ້ເຮົາມາໝົດແມ່ະ'
18:29 ໝູ່ຜູ້ຮັບໃຊ້ຜູ້ນັ້ນໄດ້ຂາບລົງຕໍ່ໜ້າອ້ອນວອນວ່າ 'ຂໍກະລຸນາອົດທົນຕໍ່ຜູ້ຂ້າ
ເຖີດ ແລ້ວຜູ້ຂ້າຊິໃຊ້ໜີ້ທັງໝົດ'
18:30 ແຕ່ເຂົາຜູ້ທີ່ໄດ້ຮັບການຍົກໜີ້ມາແລ້ວກໍບໍ່ຍອມ ຈັ່ງນຳໝູ່ຜູ້ຮັບໃຊ້ລູກໜີ້ນັ້ນ
ໄປຂັງຄຸກໄວ້ ຈົນກວ່າຊິໃຊ້ໜີ້ນັ້ນໃຫ້ໝົດ
18:31 ຝ່າຍໝູ່ພວກຜູ້ຮັບໃຊ້ບັດເຫັນເຫດການແນວນັ້ນ ກໍພາກັນສະຫລົດໃຈຢ່າງ
ໃຫຍ່ ຈັ່ງນຳເຫດການທັງໝົດ ໄປບອກນາຍຂອງພວກເຂົາ
18:32 ແລ້ວນາຍຂອງເຂົາຈັ່ງໄດ້ເອີ້ນຜູ້ຮັບໃຊ້ນັ້ນມາເວົ້າວ່າ 'ໂອ້ ເຈົ້າຜູ້ຮັບໃຊ້ຊົ່ວ
ແທ້ ເຮົາໄດ້ຍົກໜີ້ໃຫ້ເຈົ້າໝົດຢູ່ແລ້ວ ຍ້ອນເຈົ້າໄດ້ອ້ອນວອນຂໍນຳເຮົາ
18:33 ເຈົ້າຄວນຊິເມດຕາຕໍ່ໝູ່ຜູ້ຮັບໃຊ້ນຳກັນ ຄືກັນກັບເຮົາໄດ້ເມດຕາເຈົ້າບໍ່ແມ່ນ
ບໍ້'
18:34 ແລ້ວນາຍຂອງເຂົາກໍຍາກຮ້າຍຢ່າງໃຫຍ່ຈັ່ງມອບຄົນໃຊ້ຜູ້ນັ້ນໄວ້ຕໍ່ເຈົ້າໜ້າທີ່
ໃຫ້ທໍລະມານຈົນກວ່າຊິໃຊ້ໜີ້ໃຫ້ໝົດ
18:35 ໃນທຳນອງດຽວກັນ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຜູ້ເພິ່ນສະຖິດໃນສະຫວັນ ກໍ
ຊິເຮັດກັບພວກເຈົ້າຄືກັນ ຄັ່ນວ່າເຈົ້າບໍ່ຍົກໂທດຄວາມຜິດໃຫ້ພີ່ນ້ອງຂອງເຈົ້າ
ດ້ວຍໃຈຈິງ"

## ມັດທາຍ ບົດທີ 19

19:1 ແລ້ວຕໍ່ມາ ບັດ ພຣະເຢຊູ ເວົ້າຖ້ອຍຄຳພວກນີ້ໝົດແລ້ວ ເພິ່ນໄດ້ອອກຈາກ
ແຄວ້ນ ກາລິເລ ເຂົ້າໄປໃນເຂດແດນແຄວ້ນ ຢູດາຍ ຟາກແມ່ນ້ຳ ຍໍດາເນ ຂ້າງ
ພູ້ນ
19:2 ແລ້ວມີໝູ່ຄົນຫລາຍຂະໜາດໄດ້ຕາມ ພຣະເຢຊູ ໄປ ແລ້ວເພິ່ນໄດ້ປົວໂລກ-
ໄພໄຂ້ເຈັບຂອງພວກເຂົາໃຫ້ເຊົາເປັນດີໝົດຄູ່ຄົນຢູ່ໜ້ອງນັ້ນ
19:3 ແລ້ວພວກ ຟາຣີຊາຍ ມາລອງໃຈ ພຣະເຢຊູ ຈັ່ງຖາມເພິ່ນເປັນບັນຫາວ່າ "ຜູ້-
ຊາຍຊິປະກັນເມຍຂອງໂຕຍ້ອນສາເຫຕຸຫຍັງກໍຕາມ ມັນຊິຖືກຕາມກົດບັນຍັດສັ່ນ
ບໍ້"

19:4 ພຣະເຢຊູ ຈັ່ງຕອບເຂົາວ່າ "ພວກເຈົ້າບໍ່ໄດ້ອ່ານບໍ້ ວ່າພຣະເຈົ້າຜູ້ເພິ່ນສ້າງໂຕ
ຄົນແຕ່ທຳອິດນັ້ນ 'ໄດ້ສ້າງເຂົາໃຫ້ເປັນຜູ້ຊາຍກັບຍິງ'
19:5 ກັບເພິ່ນໄດ້ເວົ້າວ່າ 'ຍ້ອນເຫດນີ້ເນາະ ຜູ້ຊາຍຊິອອກຈາກພໍ່ແມ່ຂອງເຂົາ
ແລ້ວຊິໄປຜູກພັນຢູ່ກັບເມຍເຂົາ ແລ້ວເຂົາທັງສອງຊິກາຍເປັນເນື້ອໜັງອັນໜຶ່ງອັນ
ດຽວກັນ'
19:6 ເຂົາຈັ່ງບໍ່ເປັນສອງອີກຕໍ່ໄປ ແຕ່ຊິເປັນເນື້ອໜັງອັນໜຶ່ງອັນດຽວກັນ ຈັ່ງຊັ້ນຜູ້ທີ່
ພຣະເຈົ້າໃຫ້ເປັນອັນໜຶ່ງອັນດຽວກັນນັ້ນແລ້ວ ຢ່າໃຫ້ຜູ້ໃດເຮັດໃຫ້ເຂົາແຕກແຍກ
ກັນເລີຍ"
19:7 ແລ້ວພວກ ຟາຣີຊາຍ ຈັ່ງຖາມເພິ່ນຊ້ຳອີກວ່າ "ຄັ່ນຈັ່ງຊັ້ນ ເປັນຫຍັງ ໂມເຊ ໄດ້
ສັ່ງໃຫ້ຍື່ນໜັງສືປະກັນກັນເປັນທາງການ ໃຫ້ປະກັນເມຍໄດ້"
19:8 ພຣະເຢຊູ ໂຕ້ຕອບເຂົາວ່າ " ໂມເຊ ໄດ້ຍອມໃຫ້ພວກເຈົ້າປະກັນເມຍຂອງໂຕ
ຍ້ອນເຫດວ່າຈິດໃຈຂອງພວກເຈົ້າແຂງກະດ້າງ ແຕ່ທຳອິດມາມັນບໍ່ໄດ້ເປັນຈັ່ງ-
ຊັ້ນ
19:9 ແລ້ວເຮົາບອກພວກເຈົ້າວ່າ ຜູ້ໃດປະກັນເມຍຂອງໂຕ (ເວັ້ນແຕ່ເມຍເປັນຊູ້)
ແລ້ວໄປເອົາເມຍໃໝ່ກໍຜິດປະເວນີ ກັບວ່າຜູ້ຊາຍຜູ້ໃດທີ່ຮັບເອົາເມຍເດີມທີ່ຖືກ
ປະກັນແລ້ວນັ້ນ ມາເປັນເມຍຂອງໂຕ ມັນກໍຜິດປະເວນີຄືກັນ"
19:10 ບັດນີ້ ພວກລູກສິດຂອງ ພຣະເຢຊູ ຈັ່ງບອກເພິ່ນວ່າ "ຄັ່ນເປັນຈັ່ງຊັ້ນ ເຖິງ
ເລື່ອງຜູ້ຊາຍກັບເມຍຂອງເຂົາ ບໍ່ເອົາເມຍກໍຊິດີກວ່າເນາະ"
19:11 ແຕ່ເພິ່ນຕອບເຂົາວ່າ "ບໍ່ແມ່ນຄູ່ຄົນທີ່ສາມາດຮັບຕາມຖ້ອຍຄຳເລື່ອງການ
ເປັນໂສດນີ້ໄດ້ ມີແຕ່ຜູ້ທີ່ພຣະເຈົ້າໂຜດໃຫ້ຄວາມສາມາດກໍຊິຮັບໄດ້
19:12 ຄືມີຜູ້ລາງຄົນເປັນບັນເດາະເກີດມາແຕ່ທ້ອງແມ່ ກັບຜູ້ລາງຄົນທີ່ຖືກຄົນອື່ນ
ເຮັດເຂົາໃຫ້ເປັນບັນເດາະກໍມີ ແລ້ວກໍມີຜູ້ລາງຄົນທີ່ບໍ່ແຕ່ງ ຊຶ່ງຍົກເວັ້ນໄວ້ຍ້ອນ
ເຫັນແກ່ລາຊະອານາຈັກສະຫວັນ *ຂອງພຣະເຈົ້າ* ໃຜທີ່ສາມາດຮັບເອົາການຍົກ
ເວັ້ນແນວນີ້ໄດ້ ກໍໃຫ້ເຂົາຮັບເອົາຊະ"
19:13 ຍາມນັ້ນ ມີການພາເດັກນ້ອຍມາຫາ ພຣະເຢຊູ ເພື່ອຊິໃຫ້ເພິ່ນວາງມືອະທິ-
ຖານເວົ້ານຳພຣະເຈົ້າ *ເພື່ອເຂົາ* ແຕ່ພວກລູກສິດກໍເລີຍເວົ້າໃຫ້ເຂົາ

19:14 ແຕ່ ພຣະເຢຊູ ບອກວ່າ “ປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາ ໂລດ ເດີ້ ຢ່າຫ້າມ
ເຂົາໄວ້ເລີຍເດີ້ ຍ້ອນວ່າລາຊະອານາຈັກສະຫວັນເປັນຂອງຄົນຢ່າງເດັກນ້ອຍ
ພວກນີ້ຢູ່ແລ້ວ”
19:15 ເວົ້າແລ້ວເພິ່ນໄດ້ວາງມືຂອງເພິ່ນເທິງເດັກນ້ອຍພວກນັ້ນ ແລ້ວກໍອອກຈາກ
ໝ້ອງນັ້ນໄປ
19:16 ແລ້ວນີ້ແຫລະ ມີຜູ້ຊາຍຄົນໜຶ່ງມາເວົ້າກັບ ພຣະເຢຊູ ວ່າ “ອາຈານຜູ້ດີເອີຍ
ຜູ້ຂ້າຊິຕ້ອງເຮັດແນວດີອີຫຍັງຈັ່ງຊິໄດ້ຊີວິດອັນຕະຫລອດໄປເປັນນິດ”
19:17 ພຣະເຢຊູ ຕອບເຂົາວ່າ “ເຈົ້າເອີ້ນເຮົາວ່າເປັນຜູ້ດີຍ້ອນຫຍັງ ບໍ່ມີໃຜເປັນຜູ້ດີ
ອີຫລີນອກຈາກພຣະເຈົ້າແຕ່ຜູ້ດຽວເພິ່ນເທົ່ານັ້ນ ແຕ່ຄັນເຈົ້າຢາກຊິເຂົ້າສູ່ຊີວິດ
ອັນຕະຫລອດໄປເປັນນິດ ກໍໃຫ້ຮັກສາກົດບັນຍັດໄວ້ເດີ້”
19:18 ຜູ້ຊາຍຄົນນັ້ນຖາມ ພຣະເຢຊູ ວ່າ “ກົດບັນຍັດຂໍ້ໃດແໜ່” ພຣະເຢຊູ ຕອບວ່າ
“ຢ່າຂ້າຄົນ ຢ່າຫລິ້ນຊູ້ ຢ່າລັກຊັບຂອງເພິ່ນ ຢ່າເປັນພະຍານບໍ່ຈິງ
19:19 ໃຫ້ກຽດພໍ່ແມ່ຂອງໂຕ ກັບໃຫ້ຮັກແພງເພື່ອນບ້ານຄືກັນກັບຮັກໂຕເອງ”
19:20 ຄົນໜຸ່ມນັ້ນເລີຍບອກ ພຣະເຢຊູ ວ່າ “ຂໍ້ແນວໝູ່ນີ້ຜູ້ຂ້າໄດ້ຖືຮັກສາໄວ້ຄູ່ແນວ
ຕັ້ງແຕ່ເປັນເດັກມາຢູ່ແລ້ວ ຜູ້ຂ້າຍັງຂາດອີຫຍັງບໍ້”
19:21 ພຣະເຢຊູ ຈັ່ງບອກເຂົາວ່າ “ຄັນເຈົ້າຢາກເປັນຜູ້ດີຄົບຖ້ວນ ກໍໃຫ້ໄປຂາຍ
ພວກຊັບສິ່ງຂອງໆ ເຈົ້າເດີ້ ແລ້ວແຈກຈ່າຍໃຫ້ຄົນຍາກຈົນຊະ ຈັ່ງຊິມີຊັບສົມບັດ
ໃນສະຫວັນ ແລ້ວໃຫ້ຕາມເຮົາມາເດີ້”
19:22 ບັດຄົນໜຸ່ມໄດ້ຍິນຖ້ອຍຄຳນັ້ນ ເຂົາກໍອອກໄປຢ່າງທຸກໃຈຫລາຍ ຍ້ອນເຂົາມີ
ຊັບສົມບັດຫລາຍຂະໜາດ
19:23 ບັດນີ້ ພຣະເຢຊູ ເວົ້າກັບພວກລູກສິດຂອງເພິ່ນວ່າ “ເຮົາຊິບອກຄວາມຈິງໃຫ້
ພວກເຈົ້າ ໂລດ ວ່າ ຄົນຮັ່ງມີຊິເຂົ້າໃນລາຊະອານາຈັກສະຫວັນກໍຊິເປັນການ
ຍາກ
19:24 ແລ້ວເຮົາຊິບອກພວກເຈົ້າອີກວ່າ ໂຕອູດຊິລອດຮູເຂັມກໍງ່າຍກວ່າຄົນຮັ່ງມີຊິ
ເຂົ້າໃນລາຊະອານາຈັກຂອງພຣະເຈົ້າໄດ້”

19:25 ບັດພວກລູກສິດຂອງເພິ່ນ ພໍໄດ້ຍິນແລ້ວກໍແປກໃຈເປັນຕາງຶດຫລາຍ ຈັ່ງ
ເວົ້າວ່າ "ຄັ່ນຈັ່ງຊັ້ນໃຜຊິລອດພົ້ນໄດ້"
19:26 ແຕ່ ພຣະເຢຊູ ຫລຽວເບິ່ງພວກລູກສິດ ຈັ່ງເວົ້າກັບເຂົາວ່າ "ສໍາລັບຄົນ ມັນກໍ
ເປັນໄປບໍ່ໄດ້ເລີຍ ແຕ່ສໍາລັບພຣະເຈົ້າ ໝົດຄູ່ແນວກໍເປັນໄປໄດ້ ໂລດ "
19:27 ແລ້ວ ເປໂຕ ໄດ້ເວົ້າຂຶ້ນມາວ່າ "ນີ້ແຫລະ ພວກຜູ້ຂ້າໄດ້ສະລະໝົດຄູ່ແນວ
ແລ້ວໄດ້ຕິດຕາມມາແລ້ວ *(ຕ່າງກັບຜູ້ຊາຍໜຸ່ມຜູ້ນັ້ນ)* ພວກຜູ້ຂ້າຊິໄດ້ອີຫຍັງ
ຕອບແທນແໜ່"
19:28 ພຣະເຢຊູ ເລີຍເວົ້າກັບເຂົາວ່າ "ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ຄື
ພວກເຈົ້າຜູ້ທີ່ຕິດຕາມເຮົາມານີ້ ໃນຍຸກທີ່ຊິມາບັດເຮົາຜູ້ເປັນບຸດມະນຸດ ຊິນັ່ງບັນ-
ລັງຂອງເຮົາ ທີ່ປະກອບດ້ວຍສະຫງ່າລາສີອັນຮຸ່ງເຮືອງນັ້ນ ຝ່າຍພວກເຈົ້າກໍຊິນັ່ງ
ບັນລັງສິບສອງບັນລັງ ກັບຊິພິພາກສາຊົນຊາດ ອິສະຣາເອນ ສິບສອງຕະກູນນັ້ນ
ເລີຍ
19:29 ແລ້ວຄູ່ຄົນທີ່ສະລະເຮືອນ ພີ່ນ້ອງຊາຍຍິງ ພໍ່ແມ່ ເມຍ ລູກ ທີ່ດິນ ຍ້ອນເຫັນ
ແກ່ນາມຂອງເຮົາ ຜູ້ນັ້ນຊິໄດ້ຜົນຕອບແທນຮ້ອຍເທົ່າ ກັບຊິໄດ້ຊີວິດອັນຕະ-
ຫລອດໄປເປັນນິດເປັນນໍລະດົກນໍາ
19:30 ແຕ່ມີຫລາຍຄົນທີ່ມີອັນດັບສູງກໍຊິກາຍເປັນອັນດັບຕໍ່າ ແລ້ວຜູ້ທີ່ມີອັນດັບຕໍ່າ
ກໍຊິກາຍເປັນອັນດັບສູງ"

## ມັດທາຍ ບົດທີ 20

20:1 "ຄືວ່າ ລາຊະອານາຈັກສະຫວັນປຽບຄືເຈົ້າຂອງເຮືອນຄົນໜຶ່ງອອກໄປຈ້າງ
ຄົນງານແຕ່ເຊົ້າມືດເຮັດວຽກໃນສວນອະງຸ່ນຂອງ ລາວ
20:2 ບັດ ລາວ ຕົກລົງກັບລູກຈ້າງ ວ່າຊິໃຫ້ຄ່າຈ້າງເປັນໜຶ່ງເດນາຣິອົນຕໍ່ມື້ ຕົກລົງ
ແລ້ວກໍໃຊ້ພວກເຂົາອອກໄປເຮັດວຽກເຮັດງານໃນສວນອະງຸ່ນຂອງ ລາວ
20:3 ພໍຮອດປະມານສາມໂມງເຊົ້າ ເຈົ້າຂອງເຮືອນກໍອອກໄປທາງຕະຫລາດ ເຫັນ
ຄົນອື່ນຢືນຢູ່ກາງຕະຫລາດ ບໍ່ໄດ້ເຮັດຫຍັງ

20:4 ແລ້ວ ລາວ ຈັ່ງເວົ້າກັບພວກເຂົາວ່າ ‘ໃຫ້ພວກເຈົ້າໄປເຮັດງານໃນສວນອະງຸ່ນ
ຂອງເຮົານຳເຂົາເດີ້ ແລ້ວເຮົາຊິໃຫ້ຄ່າຈ້າງພວກເຈົ້າຕາມສົມຄວນ’ ພວກເຂົາກໍ
ເລີຍພາກັນໄປ
20:5 ແລ້ວເຈົ້າຂອງເຮືອນກໍອອກໄປອີກສອງອ້ອມ ເປັນເວລາທ່ຽງ ກັບບ່າຍສາມ
ໂມງ ໄປຫາຄົນງານຄືເກົ່າ
20:6 ແລ້ວປະມານຫ້າໂມງແລງລາວກໍອອກໄປອີກ ໄດ້ຮັບຄົນອື່ນໆ ອີກ ຢືນຢູ່ບໍ່
ໄດ້ເຮັດຫຍັງ ຈັ່ງຖາມພວກເຂົາວ່າ ‘ເປັນຫຍັງພວກເຈົ້າຈັ່ງຢືນຢູ່ນີ້ໝົດມື້ຊື່ໆ’
20:7 ພວກເຂົາຕອບ ລາວ ວ່າ ‘ຍ້ອນບໍ່ມີໃຜມາຈ້າງພວກຂ້ອຍ’ ເຈົ້າຂອງເຮືອນ
ເລີຍບອກເຂົາວ່າ ‘ໃຫ້ພວກເຈົ້າໄປເຮັດງານໃນສວນອະງຸ່ນຂອງເຮົານຳເຂົາເດີ້
ແລ້ວເຮົາຊິໃຫ້ຄ່າຈ້າງຕາມສົມຄວນ’
20:8 ບັດໃກ້ຊິຮອດຄ່ຳ ເຈົ້າຂອງສວນອະງຸ່ນຈັ່ງສັ່ງຄົນເບິ່ງແຍງງານວ່າ ‘ໃຫ້ເອີ້ນ
ຄົນງານມາ ແລ້ວຈ່າຍຄ່າຈ້າງໃຫ້ເຂົາ ໃຫ້ພວກຄົນງານທີ່ມາຕາມຫລັງກ່ອນ ຈົນ
ໄປຮອດພວກຄົນງານທີ່ມາແຕ່ທຳອິດ’
20:9 ແລ້ວບັດພວກຄົນທີ່ຮັບຈ້າງປະມານຫ້າໂມງແລງນັ້ນໄດ້ມາຮັບຄ່າຈ້າງ ເຂົາຄູ່
ຄົນໄດ້ຄົນລະໜຶ່ງເດນາຣິອົນ
20:10 ແຕ່ຝ່າຍພວກຄົນທີ່ຮັບຈ້າງແຕ່ທຳອິດນັ້ນ ບັດມາຮັບຄ່າຈ້າງ ເຂົາຄຶດວ່າຄົງ
ຊິໄດ້ຫລາຍກວ່າ ແຕ່ໄດ້ຄົນລະໜຶ່ງເດນາຣິອົນຄືກັນ
20:11 ແລ້ວບັດໄດ້ຮັບເງິນແລ້ວ ພວກເຂົາໄດ້ຈົ່ມຕໍ່ວ່າເຈົ້າຂອງເຮືອນ
20:12 ວ່າ ‘ພວກທີ່ມາຕາມຫລັງ ເຮັດງານແຕ່ຊົ່ວໂມງດຽວ ແລ້ວນາຍຈ່າຍຄ່າຈ້າງ
ພວກເຂົາທໍ່ກັນກັບພວກເຮົາທີ່ເຮັດງານໜັກ ຕາກແດດໝົດມື້’
20:13 ແຕ່ນາຍງານກໍຕອບຄົນໜຶ່ງໃນພວກນັ້ນວ່າ ‘ໝູ່ພວກເອີຍ ເຮົາບໍ່ໄດ້ໂກງ
ພວກເຈົ້າດອກ ເຈົ້າໄດ້ຕົກລົງກັບເຮົາແລ້ວຊິເອົານີ້ລະໜຶ່ງຫລຽນ *ເດນາຣິອົນ* ບໍ່
ແມ່ນບໍ້
20:14 ໃຫ້ເອົາຄ່າຈ້າງຂອງເຈົ້າໄປຊະ ຄັນເຮົາພໍໃຈທີ່ຊິໃຫ້ຄ່າຈ້າງພວກຄົນທີ່ມາ
ເຮັດງານຕາມຫລັງນັ້ນ ທໍ່ກັນກັບທີ່ໃຫ້ເຈົ້າມັນຊິເປັນຫຍັງ

20:15 ມັນຊິບໍ່ຖືກຕາມກົດບັນຍັດບໍ້ ຄັ່ນເຮົາເຮັດຕາມໃຈປາດຖະໜາກັບສິ່ງຂອງ
ຂອງເຮົາເອງ ບໍ່ແມ່ນໃນຕາຂອງເຈົ້າມອງເຮົາໃນທາງຊົ່ວ ຍ້ອນຄວາມດີຂອງ
ເຮົາສັ້ນບໍ້'
20:16 ແນວນັ້ນເນາະ ຜູ້ທີ່ຢູ່ອັນດັບຫລັງກໍຊິຢູ່ອັນດັບໜ້າ ແລ້ວຜູ້ທີ່ຢູ່ອັນດັບໜ້າກໍຊິ
ຢູ່ອັນດັບຫລັງ ຄືໄດ້ເອີ້ນໄດ້ເຊີນຄົນຫລວງຫລາຍ ແຕ່ຜູ້ທີ່ເລືອກນັ້ນກໍມີນ້ອຍ"
20:17 ແລ້ວ ພຣະເຢຊູ ບັດພວມຂຶ້ນໄປເມືອງ ເຢຣູຊາເລັມ ພໍຢູ່ລະຫວ່າງທາງກໍໄດ້
ພາພວກລູກສິດສິບສອງຄົນນັ້ນອອກໄປຈັ່ງເວົ້າກັບເຂົາວ່າ
20:18 "ນີ້ແຫລະ ບັດນີ້ພວກເຮົາພວມຊິຂຶ້ນໄປເມືອງ ເຢຣູຊາເລັມ ແລ້ວເຮົາຜູ້ເປັນ
ບຸດມະນຸດຊິຖືກທໍລະຍົດຢູ່ຫັ້ນ ມອບໄວ້ຢູ່ກັບພວກຫົວໜ້າປະໂລຫິດ ກັບນັກທຳ
ແລ້ວພວກເຂົາຊິກ່າວຫາໂທດເຮົາເຖິງຮອດຕາຍ
20:19 ແລ້ວຊິມອບເຮົາໄວ້ກັບຄົນຕ່າງຊາດໃຫ້ເຍາະເຍີ້ຍຄຶ່ງນຕີ ແລ້ວໃນທີ່ສຸດຊິໃຫ້
ຄຶງເທິງໄມ້ກາງແຂນ ແລ້ວໃນມື້ທີ່ສາມເຮົາກໍຊິເປັນຂຶ້ນມາໃໝ່"
20:20 ຍາມນັ້ນ ເມຍຂອງ ເຊເບດາຍ ຜູ້ເປັນແມ່ຂອງລູກຊາຍ ລາວ ນັ້ນ *(ຄື ຢາໂກ-
ໂບ ກັບ ໂຢຮັນ)* ໄດ້ພາລູກຊາຍ ລາວ ມາເຄົາລົບ ພຣະເຢຊູ ຍ້ອນຢາກຂໍແນວ
ໜຶ່ງຈາກເພິ່ນ
20:21 ພຣະເຢຊູ ເລີຍຖາມນາງນັ້ນວ່າ "ເຈົ້າຕ້ອງການຫຍັງ" ນາງໄດ້ຕອບເພິ່ນວ່າ
"ຂໍກະລຸນາອະນຸຍາດໃຫ້ລູກຊາຍຂອງຜູ້ຂ້າສອງຄົນນີ້ນັ່ງໃນລາຊະອານາຈັກ
ຂອງທ່ານແໜ່ ເບື້ອງຂວາຜູ້ໜຶ່ງ ເບື້ອງຊ້າຍຜູ້ໜຶ່ງ"
20:22 ແຕ່ ພຣະເຢຊູ ຕອບເຂົາວ່າ "ເຈົ້າບໍ່ຮູ້ຈັກດອກ ແນວທີ່ເຈົ້າຂໍນັ້ນ ຈອກທີ່ເຮົາ
ຊິຕ້ອງຮັບດື່ມຈາກຫັ້ນເຈົ້າຊິດື່ມໄດ້ບໍ້ ກັບການທີ່ເຮົາຊິຕ້ອງຖືກຈຸ່ມລົງຫັ້ນ ເຈົ້າຊິ
ຮັບຈຸ່ມລົງໄດ້ບໍ້" ພວກເຂົາຕອບເພິ່ນວ່າ "ພວກຜູ້ຂ້າເຮັດໄດ້ເລີຍ"
20:23 ແລ້ວເພິ່ນເວົ້າກັບເຂົາຕໍ່ອີກວ່າ "ເຈົ້າຊິດື່ມຈາກຈອກຂອງເຮົາ ກັບຊິຖືກຈຸ່ມ
ລົງນຳເຮົາກໍແມ່ນຢູ່ ແຕ່ຊິ່ງຊິນັ່ງຂ້າງຂວາກັບຂ້າງຊ້າຍຂອງເຮົານັ້ນ ບໍ່ແມ່ນສິດ
ຂອງເຮົາທີ່ຊິມອບໃຫ້ ແຕ່ພຣະເຈົ້າຜູ້ເປັນພໍ່ຂອງເຮົາໄດ້ກຽມໄວ້ສຳລັບຜູ້ໃດ ກໍຊິ-
ມອບໃຫ້ຜູ້ນັ້ນ"

20:24 ບັດລູກສິດສິບຄົນນັ້ນໄດ້ຍິນແລ້ວ ພວກເຂົາກໍຂຸ່ນເຄືອງໃຈໃນພີ່ນ້ອງສອງ
ຄົນນັ້ນ
20:25 ແຕ່ ພຣະເຢຊູ ໄດ້ເອີ້ນພວກເຂົາມາເວົ້າວ່າ “ພວກເຈົ້າຮູ້ຢູ່ວ່າ ຜູ້ທີ່ປົກຄອງ
ຄົນຕ່າງຊາດເປັນຫົວໜ້າເໜືອເຂົາ ກັບພວກຫົວໜ້ານັ້ນກໍໃຊ້ອຳນາດບັງຄັບເຂົາ
20:26 ແຕ່ໃນພວກເຈົ້ານີ້ ມັນຊິບໍ່ເປັນຈັ່ງຊັ້ນເດ໊ ຄັ່ນຜູ້ໃດຢາກຊິເປັນໃຫຍ່ໃນພວກ
ເຈົ້າ ຜູ້ນັ້ນຊິຕ້ອງເປັນຜູ້ຮັບໃຊ້ໝູ່
20:27 ແລ້ວຄັ່ນຜູ້ໃດຢາກຊິເປັນເອກເປັນໃຫຍ່ໃນພວກເຈົ້າ ກໍໃຫ້ຜູ້ນັ້ນເປັນຜູ້ຮັບ-
ໃຊ້ຂອງພວກເຈົ້າເອົາ ໂລດ
20:28 ຄືກັນກັບທີ່ເຮົາຜູ້ເປັນບຸດມະນຸດບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້ເຮົາ ແຕ່ມາ
ເພື່ອຊິຮັບໃຊ້ຄົນອື່ນຕ່າງຫາກ ກັບເພື່ອມອບຖວາຍຊີວິດຂອງເຮົາ ໃຫ້ເປັນຄ່າໄຖ່
ສຳລັບຜູ້ຄົນທັງຫລາຍ”
20:29 ແລ້ວບັດພໍ ພຣະເຢຊູ ກັບພວກລູກສິດອອກໄປຈາກເມືອງ ເຢຣິໂກ ມີໝູ່ຄົນ
ຫລວງຫລາຍໄດ້ຕາມເພິ່ນໄປ
20:30 ແລ້ວນີ້ແຫລະ ມີຜູ້ຊາຍຕາບອດສອງຄົນນັ່ງຢູ່ແຄມທາງ ບັດເຂົາໄດ້ຍິນວ່າ
ພຣະເຢຊູ ຜ່ານມາ ຈັ່ງຮ້ອງວ່າ “ໂອ້ ພຣະເຢຊູ ຜູ້ເປັນລູກ ດາວິດ ເຈົ້າຂ້າ ຂໍເມດ-
ຕາຜູ້ຂ້າແໜ່ທ້ອນ”
20:31 ຝ່າຍພວກຄົນຫລວງຫລາຍຢູ່ຫັ້ນກໍເວົ້າຫ້າມເຂົາ ວ່າເຂົາບໍ່ຄວນຊິເວົ້າ ແຕ່
ແຮງຫ້າມເຂົາກໍແຮງຮ້ອງຂຶ້ນອີກວ່າ “ໂອ້ ພຣະເຢຊູ ຜູ້ເປັນລູກ ດາວິດ ເຈົ້າຂ້າ ຂໍ
ເມດຕາຜູ້ຂ້າແໜ່ທ້ອນ”
20:32 ແລ້ວ ພຣະເຢຊູ ກໍຢືນນິ່ງຢູ່ ເອີ້ນເຂົາມາ ເວົ້າວ່າ “ພວກເຈົ້າຢາກໃຫ້ເຮົາເຮັດ
ຫຍັງໃຫ້ເຈົ້າ”
20:33 ພວກເຂົາເວົ້າກັບເພິ່ນວ່າ “ທ່ານເຈົ້າຂ້າ ຂໍໃຫ້ຕາຂອງຜູ້ຂ້າເບິ່ງເຫັນໄດ້
ທ້ອນ”
20:34 ຈັ່ງຊັ້ນ ພຣະເຢຊູ ຈັ່ງມີໃຈອິຕົນເມດຕາເຂົາ ກໍເລີຍເອົາມືແຕະຕາຂອງເຂົາ
ແລ້ວໃນຍາມນັ້ນພໍດີ ຕາຂອງເຂົາທັງສອງຄົນກໍເຫັນຮຸ່ງ ໂລດ ເຂົາເລີຍຕິດຕາມ
ເພິ່ນໄປ

# ມັດທາຍ ບົດທີ 21

21:1 ບັດ ພຣະເຢຊູ ກັບພວກລູກສິດມາໃກ້ຊິຮອດເມືອງ ເຢຣູຊາເລັມ ຄືມາເຖິງໝູ່-
ບ້ານ ເບດຟາເຄ ຊຶ່ງຢູ່ຕີນພູເຂົາໝາກກອກເທດ ພຣະເຢຊູ ເລີຍໃຊ້ລູກສິດສອງ
ຄົນ
21:2 ສັ່ງເຂົາວ່າ "ໃຫ້ເຂົ້າໄປໃນໝູ່ບ້ານຢູ່ທາງໜ້າເຈົ້ານັ້ນ ແລ້ວເຈົ້າຊິພົ້ລາແມ່ໂຕ
ໜຶ່ງພໍດີ ຖືກຜູກໄວ້ຢູ່ກັບລານ້ອຍ ໃຫ້ແກ້ແລ້ວຈູງມາໃຫ້ເຮົາເດີ້
21:3 ແລ້ວຄັນມີຜູ້ໃດວ່າອີຫຍັງກັບເຈົ້າ ກໍໃຫ້ບອກເຂົາວ່າ 'ອົງພຣະຜູ້ເປັນເຈົ້າ
ຕ້ອງການຊິໃຊ້' ແລ້ວຜູ້ນັ້ນຊິປ່ອຍໃຫ້ເອົາມາ ໂລດ "
21:4 ເຫດການແນວໝູ່ນີ້ ເປັນໄປກໍເພື່ອຊິສຳເລັດຕາມ ພຣະຄຳ ຂອງພຣະເຈົ້າທີ່
ກ່າວໄວ້ໂດຍຜູ້ເປັນປາກເປັນສຽງຂອງເພິ່ນ
21:5 "ໃຫ້ບອກທິດາຂອງ ຊີໂອນ ວ່າ ນີ້ແຫລະ ກະສັດຂອງນາງມາຫານາງແລ້ວ
ໂດຍໃຈອ່ອນສຸພາບ ໄດ້ນັ່ງເທິງຫລັງລູກລາ"
21:6 ແລ້ວລູກສິດສອງຄົນນັ້ນ ໄດ້ອອກໄປເຮັດຕາມທີ່ ພຣະເຢຊູ ສັ່ງໄວ້
21:7 ແລ້ວຈັ່ງຈູງລາໂຕແມ່ກັບລູກນ້ອຍມາ ກັບເອົາເສື້ອຂອງເຂົາພາດເທິງຫລັງລາ
ແລ້ວເຂົາໃຫ້ເພິ່ນນັ່ງເທິງຫລັງລານັ້ນ
21:8 ແລ້ວມີໝູ່ຄົນຫລວງຫລາຍຂະໜາດໄດ້ເອົາເສື້ອຜ້າໜ້າແພຂອງໂຕມາປູຕາມ
ຫົນທາງ ຜູ້ລາງຄົນກໍຕັດເອົາງ່າໄມ້ມາປູຕາມຫົນທາງນຳ
21:9 ແລ້ວໝູ່ຄົນຫລວງຫລາຍຊຶ່ງຍ່າງໄປທາງໜ້າ ກັບຜູ້ທີ່ມາທາງຫລັງກໍພ້ອມກັນ
ໂຫ່ຮ້ອງ ອວຍພອນວ່າ " ໂຮຊັນນາ ຕໍ່ ບຸດຂອງກະສັດ ດາວິດ 'ຂໍຊົງພຣະຈະ-
ເລີນ ຜູ້ທີ່ມາໃນນາມຂອງອົງພຣະຜູ້ເປັນເຈົ້າ ໂຮຊັນນາ ' ໃນທີ່ສູງສຸດ"
21:10 ແລ້ວບັດພໍ ພຣະເຢຊູ ເຂົ້າໄປໃນເມືອງ ເຢຣູຊາເລັມ ພວກຄົນທົ່ວເມືອງກໍ-
ພາກັນແຕກຕື່ນຖາມກັນວ່າ "ເພິ່ນຜູ້ນີ້ເປັນຜູ້ໃດກັນນໍ້"
21:11 ແລ້ວໝູ່ຄົນທັງຫລາຍທີ່ແຫ່ມານັ້ນບອກວ່າ "ທ່ານຜູ້ນີ້ແມ່ນ ເຢຊູ ຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້າຈາກເມືອງ ນາຊາເຣັດ ໃນແຄວ້ນ ກາລິເລ "

21:12 ແລ້ວ ພຣະເຢຊູ ຈັ່ງເຂົ້າໄປໃນພຣະວິຫານຂອງພຣະເຈົ້າ ຂັບໄລ່ພວກຜູ້ຊື້
ຂາຍໃນພຣະວິຫານ ກັບຄວ່ຳໂຕະຜູ້ຮັບແລກເງິນ ພ້ອມທັງຄວ່ຳທີ່ນັ່ງຜູ້ຂາຍນົກ-
ເຂົານຳ
21:13 ແລ້ວເວົ້າກັບເຂົາວ່າ “ມີ ພຣະຄຳ ຂອງພຣະເຈົ້າຂຽນໄວ້ວ່າ ‘ພຣະນິເວດຂອງ
ເຮົາເຂົາຊິເອີ້ນວ່າເປັນໜ້ອງການອະທິຖານ’ ແຕ່ພວກເຈົ້າມາເຮັດໃຫ້ເປັນ ‘ຖ້ຳ
ຂອງພວກໂຈນ’”
21:14 ແລ້ວຄົນຕາບອດກັບຄົນເປ້ຍພາກັນມາຫາ ພຣະເຢຊູ ໃນພຣະວິຫານ ເພິ່ນ
ຈັ່ງປົວເຂົາໃຫ້ເຊົາເປັນດີ
21:15 ແຕ່ບັດພວກຫົວໜ້າປະໂລຫິດ ກັບນັກທຳໄດ້ເຫັນແນວເປັນຕາງຶດທີ່ເພິ່ນໄດ້
ເຮັດ ທັງໄດ້ຍິນພວກເດັກຮ້ອງໃນພຣະວິຫານວ່າ “ ໂຮຊັນນາ ຕໍ່ບຸດຂອງ ດາວິດ ”
ເຂົາທັງຫລາຍກໍພາກັນແຄ້ນເຄືອງບໍ່ພໍໃຈຫລາຍ
21:16 ພວກເຂົາກໍເລີຍຖາມ ພຣະເຢຊູ ວ່າ “ເຈົ້າບໍ່ໄດ້ຍິນແນວທີ່ເຂົາຮ້ອງກັນນັ້ນບໍ້”
ເພິ່ນຕອບເຂົາວ່າ “ເອີ້ ພວກເຈົ້າຍັງບໍ່ເຄີຍອ່ານບໍ້ ວ່າ ‘ພຣະອົງທ່ານໄດ້ຮັບຄຳ
ສັນລະເສີນອັນສົມບູນແບບຈາກປາກຂອງເດັກນ້ອຍກັບເດັກອ່ອນທີ່ຍັງກິນນົມ
ແມ່’”
21:17 ເວົ້າແລ້ວເພິ່ນໄດ້ລາເຂົາ ອອກຈາກເມືອງໄປຢູ່ໝູ່ບ້ານ ເບດທາເນຍ
21:18 ບັດມື້ອື່ນເຊົ້າມາ ຕອນ ພຣະເຢຊູ ພວມຊິເມືອເມືອງອີກ ເພິ່ນກໍຫິວຢາກກິນ
21:19 ແລ້ວບັດເພິ່ນຫລຽວເຫັນກົກໝາກເດື່ອກົກໜຶ່ງຢູ່ຕາມຮິມທາງ ເພິ່ນກໍຍ່າງ
ເຂົ້າໄປໃກ້ກໍເຫັນກົກນັ້ນບໍ່ມີໝາກ ມີແຕ່ໃບຊື່ໆ ຈັ່ງເວົ້າຄຳແຊ່ງໃສ່ກົກນັ້ນວ່າ “ແຕ່
ນີ້ໄປເຮົາບໍ່ໃຫ້ເກີດໝາກອີກຈັກເທື່ອເດີ້” ຫວ່າງນັ້ນພໍດີ ກົກໝາກເດື່ອນັ້ນກໍຫ່ຽວ-
ແຫ້ງໄປກັບໜ້ອງ
21:20 ແລ້ວບັດພວກລູກສິດໄດ້ເຫັນແນວນັ້ນ ກໍແປກໃຈເປັນຕາງຶດ ເວົ້າກັນວ່າ
“ເປັນຈັ່ງໃດໜໍ ກົກໝາກເດື່ອຈັ່ງຫ່ຽວແຫ້ງໄປໄວຂະໜາດນີ້”

21:21 ສ່ວນ ພຣະເຢຊູ ຕອບເຂົາວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ
ຄັນເຈົ້າມີຄວາມເຊື່ອໂດຍບໍ່ໄດ້ສົງໄສ ເຈົ້າຊິເຮັດໄດ້ຄືທີ່ເຮົາໄດ້ເຮັດກັບກົກໝາກ-
ເດື່ອນີ້ ແຕ່ຫລາຍກວ່ານັ້ນ ເຖິງແມ່ນເຈົ້າຊິສັ່ງພູເຂົານີ້ວ່າ ‘ໃຫ້ອອກໄປລົງທະເລ
ຊະ’ ແລ້ວມັນຊິເປັນໄປຕາມທີ່ສັ່ງນັ້ນ
21:22 ແລ້ວໝົດຄູ່ອັນຄູ່ແນວທີ່ເຈົ້າອະທິຖານຂໍນຳພຣະເຈົ້າດ້ວຍຄວາມເຊື່ອວາງ-
ໃຈ ເຈົ້າກໍຊິໄດ້”
21:23 ບັດ ພຣະເຢຊູ ເຂົ້າໄປໃນພຣະວິຫານໃນຍາມທີ່ເພິ່ນພວມສອນຢູ່ ພວກຫົວ-
ໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ຂອງຜູ້ຄົນທັງຫລາຍມາຫາເພິ່ນຖາມວ່າ
“ເຈົ້າມີສິດທິມາແຕ່ໃສທີ່ຊິເຮັດແນວນີ້ ໃຜໃຫ້ສິດທິນີ້ກັບເຈົ້າ”
21:24 ພຣະເຢຊູ ຕອບເຂົາວ່າ “ເຮົາຊິຖາມພວກເຈົ້າສັກຂໍ້ໜຶ່ງນຳ ແລ້ວຄັນພວກ
ເຈົ້າບອກເຮົາໄດ້ ເຮົາຊິບອກພວກເຈົ້າຄືກັນວ່າເຮົາເຮັດການນີ້ໂດຍສິດທິອັນໃດ
21:25 ຄືພິທີຈຸ່ມນໍ້າຂອງ ໂຢຮັນ ນັ້ນໄດ້ມາແຕ່ໃສ ມາຈາກສະຫວັນຫລືຈາກຄົນຊື່ໆ”
ເຂົາໄດ້ປຶກສາກັນວ່າ “ຄັນເຮົາຊິວ່າ ‘ມາຈາກສະຫວັນ’ ເຂົາຊິໂຕ້ຕອບເຮົາວ່າ
‘ເປັນຫຍັງພວກເຈົ້າຈັ່ງບໍ່ເຊື່ອ ໂຢຮັນ ສັ້ນ’
21:26 ແຕ່ຄັນເຮົາຊິວ່າ ‘ມາຈາກຄົນ’ ພວກເຮົາກໍຢ້ານພວກຄົນທັງຫລາຍ ຍ້ອນເຂົາ
ຖືກັນວ່າ ໂຢຮັນ ເປັນຜູ້ເປັນປາກເປັນສຽງຂອງພຣະເຈົ້າ”
21:27 ເຂົາຈັ່ງຕອບ ພຣະເຢຊູ ວ່າ “ພວກເຮົາບອກບໍ່ໄດ້” ເພິ່ນຈັ່ງບອກເຂົາວ່າ “ຄັນ
ບໍ່ຊັ້ນ ເຮົາຊິບໍ່ໄດ້ບອກພວກເຈົ້າຄືກັນ ວ່າເຮົາເຮັດການນີ້ໂດຍສິດທິອັນໃດ
21:28 ແຕ່ພວກເຈົ້າຄຶດເຫັນຈັ່ງໃດ ຄືມີຜູ້ຊາຍຜູ້ໜຶ່ງມີລູກຊາຍສອງຄົນ ພໍ່ໄປຫາລູກ
ຄົນກົກບອກວ່າ ‘ລູກເອີຍ ມື້ນີ້ພໍ່ໃຫ້ໄປເຮັດວຽກໃນສວນອະງຸ່ນຂອງພໍ່ເດີ້’
21:29 ລູກຄົນນັ້ນຕອບວ່າ ‘ຂ້ອຍບໍ່ໄປດອກ’ ແຕ່ຢູ່ມາກໍກັບໃຈ ແລ້ວໄດ້ອອກໄປ
ເຮັດ
21:30 ແລ້ວພໍ່ຈັ່ງໄປຫາລູກຄົນທີ່ສອງຈັ່ງເວົ້າແນວດຽວກັນ ລູກນັ້ນຕອບວ່າ ‘ຂ້ອຍຊິ
ອອກໄປ’ ແຕ່ເຂົາບໍ່ໄດ້ໄປ
21:31 ໃນລູກສອງຄົນນີ້ ຄົນໃດເປັນຜູ້ເຮັດຕາມຄວາມປະສົງຂອງພໍ່” ເຂົາຕອບ
ເພິ່ນວ່າ “ລູກກົກ” ພຣະເຢຊູ ຕອບເຂົາວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ

ໂລດ ວ່າ ພວກເກັບພາສີກັບແມ່ຍິງຂາຍໂຕຊິເຂົ້າໄປໃນລາຊະອານາຈັກຂອງ-
ພຣະເຈົ້າກ່ອນພວກເຈົ້າຊໍ້າ
21:32 ຄືກັນກັບວ່າ ໂຢຮັນ ນັ້ນໄດ້ມາຫາພວກເຈົ້າໃນທາງຄວາມທ່ຽງທຳ ແລ້ວ
ພວກເຈົ້າບໍ່ຍອມເຊື່ອ ລາວ ແຕ່ພວກເກັບພາສີກັບພວກແມ່ຍິງຂາຍໂຕນັ້ນ ເຂົາ
ໄດ້ເຊື່ອ ລາວ ແຕ່ຝ່າຍພວກເຈົ້ານີ້ ເຖິງແມ່ນໄດ້ເຫັນແລ້ວ ຫລັງໄດ້ເຫັນກໍບໍ່ໄດ້
ກັບໃຈເຊື່ອ ລາວ
21:33 ໃຫ້ຟັງຄຳປຽບທຽບອີກວ່າ ຍັງມີເຈົ້າຂອງບ້ານຜູ້ໜຶ່ງໄດ້ເຮັດສວນອະງຸ່ນ
ແລ້ວໄດ້ລ້ອມຮົ້ວກົກໄມ້ໄວ້ອ້ອມ ແລ້ວໄດ້ຂຸດຫລຸມຢ່ຳອະງຸ່ນໄວ້ໃນສວນນຳ ກັບ
ສ້າງຫໍຍາມເຝົ້າ ເຮັດແລ້ວກໍໃຫ້ພວກຊາວສວນເຊົ່າ ແລ້ວ ລາວ ໄດ້ເດີນທາງອອກ
ໄປຢູ່ເມືອງໄກໆ
21:34 ບັດຍາມເກັບຜົນອະງຸ່ນໃກ້ຊິມາຮອດແລ້ວ ເຈົ້າຂອງສວນຈັ່ງໃຊ້ພວກຜູ້ຮັບ-
ໃຊ້ໄປຫາຄົນເຊົ່າສວນ ເພື່ອຊິໄດ້ຮັບຜົນອະງຸ່ນສ່ວນທີ່ເປັນຂອງ ລາວ
21:35 ແລ້ວຄົນເຊົ່າສວນນັ້ນຈັບພວກຜູ້ຮັບໃຊ້ທີ່ເຈົ້າຂອງສວນສົ່ງມາ ຄ້ຽນຕີຄົນ
ໜຶ່ງ ກັບຂ້າຄົນໜຶ່ງ ແລ້ວເອົາຫີນຂວ້າງໃຫ້ຕາຍອີກຄົນໜຶ່ງ
21:36 ແລ້ວອີກເທື່ອໜຶ່ງເຈົ້າຂອງສວນກໍໃຊ້ຜູ້ຮັບໃຊ້ຄົນອື່ນໆ ຂອງ ລາວ ໄປ
ຫລາຍກວ່າແຕ່ກ່ອນ ແຕ່ພວກຄົນທີ່ເຊົ່າສວນຂອງ ລາວ ນັ້ນ ກໍໄດ້ເຮັດໃສ່ເຂົາຄື
ເກົ່າ
21:37 ແຕ່ເທື່ອສຸດທ້າຍ ລາວ ຈັ່ງໃຊ້ລູກຊາຍຂອງ ລາວ ໄປຫາ ແລ້ວນຶກໃນໃຈວ່າ
'ພວກເຂົາຄືຊິເຄົາລົບລູກຊາຍຂອງເຮົາຢູ່ດອກ'
21:38 ແຕ່ບັດພວກຄົນເຊົ່າສວນເຫັນລູກຊາຍເຈົ້າຂອງສວນມາ ກໍເວົ້າກັນວ່າ 'ຄົນ
ນີ້ເນາະເປັນຜູ້ຮັບມໍລະດົກ ມາເຖີ ເຮົາຊິຂ້າເຂົາຊິເປັນຫຍັງ ແລ້ວເຮົາຊິຖືເອົາເອົາ
ມໍລະດົກຂອງເຂົາຊະ'
21:39 ແລ້ວພວກເຂົາຈັ່ງພາກັນຈັບເອົາລູກຊາຍຜູ້ນັ້ນ ລາກອອກໄປນອກສວນອະ-
ງຸ່ນແລ້ວຂ້າຖິ້ມ
21:40 ຈັ່ງຊັ້ນ ບັດເຈົ້າຂອງສວນອະງຸ່ນມາ ລາວ ຊິເຮັດອີຫຍັງກັບຄົນເຊົ່າສວນ
ພວກນັ້ນ"

21:41 ບັດນີ້ ພວກເຂົາທີ່ຟັງ ພຣະເຢຊູ ໄດ້ຕອບເພິ່ນວ່າ “ເຂົາຊິທຳລາຍລ້າງຄົນ
ຊົ່ວພວກນັ້ນຢ່າງເດັດຂາດ ກັບຊິໃຫ້ຄົນອື່ນໆ ເຊົ່າສວນອະງຸ່ນຂອງ ລາວ ນັ້ນ ຄືຊິ
ຫາຜູ້ທີ່ຊິແບ່ງຜົນຂອງສວນອະງຸ່ນກັບ ລາວ ໃຫ້ຖືກຕ້ອງຕາມລະດູ”
21:42 ພຣະເຢຊູ ເວົ້າກັບເຂົາວ່າ “ພວກເຈົ້າຍັງບໍ່ເຄີຍອ່ານໃນ ພຣະຄຳ ບໍ້ ໝ້ອງທີ່
ວ່າ ‘ສິລາທີ່ຊ່າງກໍ່ປະຕິເສດນັ້ນ ສິລາອັນດຽວກັນນັ້ນ ກໍໄດ້ເປັນສິລາມຸມເອກແລ້ວ
ການນີ້ເປັນມາຈາກອົງພຣະຜູ້ເປັນເຈົ້າ ກັບເປັນທີ່ປະທັບໃຈຢ່າງດີເລີດໃນສາຍ-
ຕາຂອງເຮົາ’
21:43 ຈັ່ງຊັ້ນເຮົາບອກພວກເຈົ້າວ່າ ລາຊະອານາຈັກຂອງພຣະເຈົ້າຊິຖືກຖອນ
ອອກຈາກມືຂອງພວກເຈົ້າ ແລ້ວຍົກໃຫ້ອີກຊົນຊາດໜຶ່ງ ແລ້ວພວກເຂົາຊິເຮັດໃຫ້
ເກີດຜົນອັນດີຕາມສົມຄວນ
21:44 ແລ້ວຜູ້ໃດລົ້ມລົງໃສ່ສິລານີ້ ຜູ້ນັ້ນຊິຕ້ອງແຕກມຸ່ນໄປ ແຕ່ສິລານີ້ຊິຕົກລົງທັບ
ຜູ້ໃດ ກໍຊິບຸກໂຈມຕີຜູ້ນັ້ນຈົນມຸ່ນເປັນຜົງ”
21:45 ບັດພວກຫົວໜ້າປະໂລຫິດກັບພວກ ຟາຣີຊາຍ ໄດ້ຍິນຄຳປຽບທຽບຂອງ
ພຣະເຢຊູ ນັ້ນ ພວກເຂົາກໍຮູ້ເມື່ອໂຕວ່າແນວທີ່ເພິ່ນເວົ້ານັ້ນ ກໍເວົ້າເຖິງພວກເຂົາ
ເອງ
21:46 ແຕ່ ບັດພວກເຂົາຄຶດຢາກຈັບ ພຣະເຢຊູ ເຂົາກໍຢ້ານໝູ່ຄົນຫລວງຫລາຍ
ຍ້ອນໝູ່ຄົນຫລວງຫລາຍນັ້ນຖືວ່າ ພຣະເຢຊູ ເປັນຜູ້ເປັນປາກເປັນສຽງຂອງພຣະ-
ເຈົ້າ

# ມັດທາຍ ບົດທີ 22

22:1 ແລ້ວ ພຣະເຢຊູ ເວົ້າກັບເຂົາເປັນຄຳປຽບທຽບອີກວ່າ
22:2 “ລາຊະອານາຈັກສະຫວັນປຽບຄືກະສັດອົງໜຶ່ງ ຊຶ່ງໄດ້ຈັດພິທີແຕ່ງງານໃຫ້
ລູກຊາຍຂອງ ລາວ
22:3 ແລ້ວໄດ້ໃຊ້ພວກຜູ້ຮັບໃຊ້ອອກໄປເອີ້ນເອົາຜູ້ທີ່ໄດ້ຮັບການເຊີນມາໃນງານ
ການແຕ່ງນັ້ນ ແຕ່ພວກເຂົາບໍ່ຍອມມາເລີຍ
22:4 ແລ້ວອີກເທື່ອໜຶ່ງ ລາວ ຈັ່ງໃຊ້ພວກຜູ້ຮັບໃຊ້ຜູ້ອື່ນໄປອີກ ສັ່ງວ່າ ‘ໃຫ້ບອກຜູ້
ຮັບເຊີນນັ້ນວ່າ ນີ້ແຫລະ ເຮົາໄດ້ຈັດງານລ້ຽງໄວ້ແລ້ວ ງົວກັບສັດອ້ວນຢ່າງອື່ນນັ້ນ

ເຮົາກໍຂ້າກຽມໄວ້ໝົດແລ້ວ ສິ່ງສາລະພັດອື່ນໆ ກໍກຽມພ້ອມນຳ ໃຫ້ມາເປັນກຽດ
ຮ່ວມພິທີການແຕ່ງງານນີ້ເຖີ'
22:5 ແຕ່ພວກເຂົາກໍເມີນເສີຍກັບຫົວເຍາະເຍີ້ຍ ຕ່າງຄົນຕ່າງອອກໄປໄຮ່ນາຂອງ-
ໂຕ ຕ່າງກໍອອກໄປຄ້າຂາຍຕາມເຄີຍ
22:6 ແລ້ວສ່ວນຄົນທີ່ເຫລືອຢູ່ ກໍຈັບພວກຜູ້ຮັບໃຊ້ຂອງກະສັດ ເວົ້າແນວດູຖູກ ເຮັດ
ສຸມສີ່ສຸມຫ້າໃສ່ ແລ້ວກໍຂ້າຖິ້ມ
22:7 ແຕ່ບັດກະສັດອົງນັ້ນໄດ້ຍິນແລ້ວ ລາວກໍເກີດຄຽດຮ້າຍຢ່າງໃຫຍ່ ຈັ່ງສັ່ງໃຫ້
ຍົກກອງທະຫານໄປ ຂ້າບໍ່ເລື່ອກພວກນັ້ນ ແລ້ວເຜົາເມືອງເຂົາໃຫ້ໝົດກ້ຽງ
22:8 ແລ້ວເພິ່ນຈັ່ງສັ່ງພວກຜູ້ຮັບໃຊ້ຂອງເພິ່ນວ່າ 'ງານແຕ່ງກໍພ້ອມຢູ່ ແຕ່ຜູ້ທີ່ໄດ້ຮັບ
ເຊີນນັ້ນບໍ່ສົມກັບງານ
22:9 ຈັ່ງຊັ້ນ ໃຫ້ອອກໄປຕາມຫົນທາງຕ່າງໆ ແລ້ວພໍ້ຄົນຫລາຍທໍ່ໃດກໍໃຫ້ເຊີນມາ
ເປັນກຽດຮ່ວມໃນພິທີແຕ່ງງານນີ້'
22:10 ບັດນີ້ ຜູ້ຮັບໃຊ້ພວກນັ້ນຈັ່ງອອກໄປເຊີນໝົດຄູ່ຄົນຕາມຫົນທາງຕ່າງໆ ແລ້ວ
ໄດ້ຮັບຫລາຍສໍ່າໃດ ກໍໄດ້ເຊີນໃຫ້ມາຮ່ວມງານ ທັງຜູ້ດີກັບຜູ້ບໍ່ດີ ຈົນງານແຕ່ງນັ້ນ
ເຕັມລົ້ນດ້ວຍແຂກ
22:11 ແລ້ວບັດກະສັດອົງນັ້ນເຂົ້າມາເບິ່ງແຂກ ກໍເຫັນຜູ້ໜຶ່ງບໍ່ໄດ້ໃສ່ເສື້ອສຳລັບ
ງານແຕ່ງ
22:12 ກະສັດຈັ່ງຖາມເຂົາວ່າ 'ມິດສະຫາຍເອີຍ ເປັນຫຍັງເຈົ້າຈັ່ງເຂົ້າມາໂດຍບໍ່ມີ
ເສື້ອສຳລັບງານແຕ່ງ' ຜູ້ນັ້ນກໍມິດຢູ່ເວົ້າບໍ່ອອກ
22:13 ບັດນີ້ ກະສັດໄດ້ສັ່ງພວກຜູ້ຮັບໃຊ້ຂອງເພິ່ນວ່າ 'ໃຫ້ມັດມືມັດຕີນຄົນນີ້ເອົາໄປ
ໂຍນຖິ້ມໃນທີ່ມືດອັນເລິກທີ່ສຸດຢູ່ທາງນອກນັ້ນ ໝ້ອງທີ່ມີການຮ້ອງໄຫ້ກັດແຂ້ວຢູ່
ຕະຫລອດ'
22:14 ຄືຜູ້ທີ່ໄດ້ເອີ້ນໄດ້ເຊີນມາກໍມີຫລາຍ ແຕ່ຜູ້ທີ່ໄດ້ເລືອກກໍມີນ້ອຍ"
22:15 ຍາມນັ້ນພວກ ຟາຣີຊາຍ ໄປປຶກສາກັນວ່າ ຊິຈັບຜິດໃນຖ້ອຍຄຳຂອງ ເຢຊູ ຜູ້
ນີ້ໄດ້ຈັ່ງໃດ

22:16 ພວກເຂົາຈັ່ງໃຊ້ພວກລູກສິດຂອງພວກເຂົາກັບຂອງ ເຮໂຣດ ໃຫ້ໄປເວົ້າກັບ
ເຢຊູ ນັ້ນວ່າ “ອາຈານເຈົ້າຂ້າ ພວກເຮົາຮູ້ຈັກຢູ່ວ່າເຈົ້າເປັນຄົນຊື່ສັດ ທີ່ສອນທາງ
ຂອງພຣະເຈົ້າດ້ວຍຄວາມສັດຈິງ ບໍ່ໄດ້ເອົາໃຈຜູ້ໃດ ຍ້ອນວ່າເຈົ້າບໍ່ໄດ້ເຫັນແກ່
ໜ້າຜູ້ໃດເລີຍ
22:17 ຈັ່ງຊັ້ນ ຊ່ອຍບອກພວກຜູ້ຂ້າວ່າ ເຈົ້າຄຶດເຫັນຈັ່ງໃດ ການທີ່ຊິສົ່ງສ່ວຍໃຫ້
ກາຍຊາ ນັ້ນ ຖືກຕ້ອງຕາມກົດບັນຍັດບໍ້”
22:18 ແຕ່ ພຣະເຢຊູ ຮູ້ໄວ້ລ່ວງໜ້າເຖິງແຜນການອັນຊົ່ວຮ້າຍເລວຊາມໃນໃຈຂອງ
ເຂົາ ຈັ່ງເວົ້າວ່າ “ພວກໜ້າຊື່ໃຈຄົດ ເປັນຫຍັງເຈົ້າຈັ່ງມາລອງໃຈເຮົາ
22:19 ໃຫ້ເອົາເງິນທີ່ຊິເສຍສ່ວຍນັ້ນມາໃຫ້ເຮົາເບິ່ງ” ເຂົາຈັ່ງເອົາເງິນຕາຫລຽນໜຶ່ງ
ມາໃຫ້ເພິ່ນ
22:20 ໄດ້ແລ້ວ ພຣະເຢຊູ ຖາມເຂົາວ່າ “ຮູບກັບຄຳຈາລຶກນີ້ເປັນຂອງໃຜ”
22:21 ພວກເຂົາຕອບ ພຣະເຢຊູ ວ່າ “ຂອງ ກາຍຊາ ” ແລ້ວເພິ່ນບອກເຂົາວ່າ “ຈັ່ງ-
ຊັ້ນແນວທີ່ເປັນຂອງ ກາຍຊາ ກໍໃຫ້ ກາຍຊາ ຊະ ແລ້ວແນວທີ່ເປັນຂອງພຣະເຈົ້າ
ກໍໃຫ້ຖວາຍໃຫ້ພຣະເຈົ້າເດີ້”
22:22 ບັດເຂົາໄດ້ຍິນຄຳຕອບຂອງເພິ່ນແລ້ວ ເຂົາກໍແປກໃຈເປັນຕາງຶດ ເຂົາຈັ່ງ
ອອກຈາກເພິ່ນໄປພາກັນຫລີບເມືອ
22:23 ໃນມື້ນັ້ນພໍດີ ມີພວກ ຊາດູກາຍ ມາຫາ ພຣະເຢຊູ ພວກນີ້ເຊື່ອວ່າ ບໍ່ມີການ
ເປັນຂຶ້ນມາຈາກຕາຍ ເຂົາຈັ່ງສໍ້ຖາມເພິ່ນວ່າ
22:24 ຖາມວ່າ “ອາຈານເຈົ້າຂ້າ ໂມເຊ ສັ່ງວ່າ ‘ຄັ່ນຜູ້ຊາຍຕາຍຍັງບໍ່ທັນມີລູກ *ຕາມ
ປະເພນີ* ນ້ອງຊາຍຕ້ອງຮັບເອົາເມຍຂອງອ້າຍຜູ້ຕາຍນັ້ນ ໃຫ້ເຂົາມີລູກເພື່ອຊິ
ຊ່ອຍສືບຕະກູນແທນອ້າຍ’
22:25 ບັດນີ້ ໃນພວກເຂົາມີພີ່ນ້ອງຜູ້ຊາຍຢູ່ເຈັດຄົນ ອ້າຍກົກມີເມຍແລ້ວກໍຕາຍປະ
ເມຍຍັງບໍ່ທັນມີລູກ ເມຍຜູ້ຕາຍຈັ່ງໄປຢູ່ກັບນ້ອງຊາຍ
22:26 ຜູ້ຊາຍຄົນທີ່ສອງ ກັບສາມກໍຄືກັນ ຈົນຮອດຄົນທີ່ເຈັດ
22:27 ແລ້ວໃນທີ່ສຸດຍິງນັ້ນກໍຕາຍຄືກັນ

22:28 ຈັ່ງຊັ້ນໃນມື້ທີ່ຊິເປັນຂຶ້ນມາຈາກຕາຍນັ້ນ ຍິງນັ້ນຊິເປັນເມຍຂອງຜູ້ຊາຍຜູ້ໃດ
ໃນເຈັດຄົນນັ້ນ ຄືນາງໄດ້ເປັນເມຍຂອງຄົນທັງເຈັດແລ້ວ"
22:29 ພຣະເຢຊູ ຕອບເຂົາວ່າ "ພວກເຈົ້າເຂົ້າໃຈຜິດແລ້ວ ແມ່ນຍ້ອນພວກເຈົ້າບໍ່ຮູ້
ພຣະຄໍາ ກັບບໍ່ຮູ້ຈັກລິດເດດຂອງພຣະເຈົ້ານໍາ
22:30 ຄືວ່າ ຊິບໍ່ມີການແຕ່ງງານກັນ ກັບການຍົກໃຫ້ເປັນຜົວເມຍກັນອີກ ໃນມື້ທີ່ຄົນ
ຊິເປັນຂຶ້ນມາຈາກຕາຍນັ້ນດອກ ແຕ່ຊິເປັນຄືພວກເທວະທູດຂອງພຣະເຈົ້າໃນ
ສະຫວັນ
22:31 ແຕ່ເລື່ອງຄົນເປັນຂຶ້ນມາຈາກຕາຍນັ້ນ ພວກເຈົ້າຍັງບໍ່ໄດ້ອ່ານຊັ້ນບໍ້ ໝ້ອງທີ່
ພຣະເຈົ້າໄດ້ເວົ້າໄວ້ໃຫ້ພວກເຈົ້າວ່າ
22:32 'ເຮົານີ້ເປັນພຣະເຈົ້າຂອງ ອັບຣາຮາມ ເປັນພຣະເຈົ້າຂອງ ອີຊາກ ກັບເປັນ
ພຣະເຈົ້າຂອງ ຢາໂຄບ ' ຈັ່ງຊີ້ເນາະ ພຣະເຈົ້າບໍ່ໄດ້ເປັນພຣະເຈົ້າຂອງຄົນຕາຍ
ແຕ່ເປັນພຣະເຈົ້າຂອງຄົນເປັນ"
22:33 ແລ້ວພໍພວກຄົນຫລວງຫລາຍໄດ້ຍິນນັ້ນ ກໍປະທັບໃຈໃນຫລັກຄໍາສອນຂອງ
ພຣະເຢຊູ
22:34 ແຕ່ບັດພວກ ຟາຣີຊາຍ ໄດ້ຍິນ ວ່າເພິ່ນເຮັດພວກ ຊາດູກາຍ ໃຫ້ໝົດປັນຍາ
ປາກບໍ່ອອກຊໍ້າ ຈັ່ງມາຕຸ້ມໂຮມກັນ
22:35 ແລ້ວມີນັກກົດບັນຍັດຜູ້ໜຶ່ງໃນພວກເຂົາ ຢາກລອງໃຈ ພຣະເຢຊູ ເລີຍຖາມ
ເພິ່ນວ່າ
22:36 "ອາຈານເຈົ້າຂ້າ ໃນກົດບັນຍັດນັ້ນ ຂໍ້ໃດເປັນເອກເປັນໃຫຍ່ກວ່າໝູ່"
22:37 ພຣະເຢຊູ ຕອບເຂົາວ່າ "ຄື 'ໃຫ້ຮັກອົງພຣະຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍ-
ສຸດຈິດສຸດໃຈຂອງເຈົ້າ ກັບດ້ວຍສໍາເລັດຄວາມນຶກຄຶດຂອງເຈົ້າ'
22:38 ນີ້ເນາະ ເປັນຂໍ້ໃນກົດບັນຍັດທີ່ເປັນເອກເປັນໃຫຍ່
22:39 ຂໍ້ທີ່ສອງກໍຄືກັນ ຄື 'ໃຫ້ຮັກເພື່ອນບ້ານຄືຮັກໂຕເອງ'
22:40 ໜັງສືກົດບັນຍັດກັບໜັງສືຄໍາພະຍາກອນທັງໝົດກໍຂຶ້ນຢູ່ກັບກົດບັນຍັດສອງ
ຂໍ້ນີ້"
22:41 ບັດພວກ ຟາຣີຊາຍ ຍັງຕຸ້ມໂຮມກັນຢູ່ຫັ້ນ ພຣະເຢຊູ ກໍຖາມພວກເຂົາວ່າ

22:42 "ພວກເຈົ້າຄຶດຈັ່ງໃດເລື່ອງ ພຣະຄຣິດ ນັ້ນ ເພິ່ນເປັນລູກຂອງໃຜສັ່ນ" ເຂົາ
ເລີຍຕອບເພິ່ນວ່າ "ເປັນລູກຂອງ ດາວິດ "
22:43 ເພິ່ນຖາມເຂົາຢໍ້າອີກວ່າ "ຄັ່ນຈັ່ງຊັ້ນ ເປັນຫຍັງ ດາວິດ ໂດຍການຊົງນຳຂອງ
ພຣະວິນຍານ ຈັ່ງໄດ້ເອີ້ນ ພຣະຄຣິດ ນັ້ນວ່າ ນາຍຊີວິດຂອງ ລາວ ຈັ່ງເວົ້າວ່າ
22:44 'ພຣະຜູ້ເປັນນາຍຊີວິດນັ້ນ ໄດ້ເວົ້າກັບນາຍຊີວິດຂອງເຮົາ ວ່າ ໃຫ້ທ່ານນັ່ງຢູ່
ທາງຂວາຂອງເຮົາ ຈົນກວ່າເຮົາຊິເຮັດໃຫ້ສັດຕູຂອງທ່ານເປັນຕັ່ງຕີນຂອງທ່ານ'
22:45 ບັດນີ້ ຄັ່ນ ດາວິດ ເອີ້ນທ່ານວ່າ ເປັນນາຍຊີວິດຂອງ ລາວ ທ່ານຊິເປັນລູກ
ເປັນຫລານຂອງ ລາວ ໄດ້ຈັ່ງໃດ"
22:46 ຖາມແລ້ວ ບໍ່ມີໃຜສາມາດຕອບ ພຣະເຢຊູ ໄດ້ເລີຍ ແມ່ນແຕ່ຄຳດຽວ ຕັ້ງແຕ່ມື້
ນັ້ນມາ ບໍ່ມີໃຜກ້າຊັກຖາມເພິ່ນອີຫຍັງອີກຕໍ່ໄປ

## ມັດທາຍ ບົດທີ 23

23:1 ຫວ່າງນັ້ນ ພຣະເຢຊູ ເວົ້າກັບພວກລູກສິດຂອງເພິ່ນກັບຄົນຫລວງຫລາຍຢູ່-
ຫັ້ນ
23:2 ເວົ້າວ່າ "ນັກທຳກັບພວກ ຟາຣິຊາຍ ໄດ້ນັ່ງຕຳແໜ່ງຂອງ ໂມເຊ
23:3 ຈັ່ງຊັ້ນໝົດຄູ່ຢ່າງຊຶ່ງເຂົາ ອາດ ຊິບອກສອນໃຫ້ພວກເຈົ້າເຮັດ ກໍຄວນຊິເຮັດ
ຕາມ ແຕ່ຢ່າສູ່ເອົາແບບການປະຕິບັດຂອງເຂົານັ້ນເດີ້ ຍ້ອນວ່າພວກເຂົາບອກ
ສອນຄົນອື່ນໄດ້ແຕ່ເຂົາເອງບໍ່ໄດ້ປະຕິບັດຕາມ
23:4 ຄືພວກເຂົາເອົາພາລະອັນລຳບາກໜັກໜາ ໃສ່ເທິງບ່າຄົນອື່ນໃຫ້ແບກ ແຕ່
ສ່ວນເຂົາເອງແມ່ນແຕ່ນິ້ວດຽວກໍບໍ່ແຕະຕ້ອງເລີຍ
23:5 ການປະຕິບັດຂອງເຂົາທັງໝົດ ເຂົາກໍເຮັດເພື່ອອອກໜ້າອອກຕາໃຫ້ຄົນອື່ນ
ເຫັນ ເຂົາເຮັດຕະຫລັບໃຫຍ່ຂຶ້ນໃສ່ຂໍ້ ພຣະຄຳ ໄວ້ໜ້າຜາກຢ່າງໄປ ກັບນຸ່ງເສື້ອ
ປະດັບດ້ວຍຍອຍຍາວ
23:6 ເຂົາມັກຢູ່ຫ້ອງຊັ້ນເຖິງພິເສດໃນງານກິນລ້ຽງ ກັບເກົ້າອີ້ຕຳແໜ່ງສູງໃນສາ-
ລາທຳ
23:7 ກັບມັກຮັບການຄຳນັບຢູ່ກາງຕະຫລາດ ກັບມັກໃຫ້ຄົນເອີ້ນເຂົາວ່າ *ທ່ານອາ-
ຈານ ທ່ານອາຈານ (ຄື 'ຣັບບີ ຣັບບີ')*

23:8 ແຕ່ວ່າ ຢ່າໃຫ້ໃຜເອີ້ນພວກເຈົ້າວ່າ ທ່ານອາຈານ ຍ້ອນເຈົ້າມີອາຈານໃຫຍ່ແຕ່
ຜູ້ດຽວຄື ພຣະຄຣິດ ນັ້ນ ກັບພວກເຈົ້າຮ່ວມກັນເປັນພີ່ນ້ອງກັນທັງໝົດ
23:9 ແລ້ວບໍ່ໃຫ້ເອີ້ນຄົນໃດໃນໂລກນີ້ວ່າ 'ບິດາ' ຍ້ອນວ່າເຈົ້າມີພຣະເຈົ້າຜູ້ເປັນພໍ່
ແຕ່ຜູ້ດຽວ ຄືຜູ້ທີ່ສະຖິດໃນສະຫວັນ
23:10 ແລ້ວຢ່າໃຫ້ຜູ້ໃດເອີ້ນເຈົ້າວ່າ 'ນາຍ' ຍ້ອນວ່າພວກເຈົ້າມີນາຍແຕ່ຜູ້ດຽວ ຄື
ພຣະຄຣິດ
23:11 ແຕ່ວ່າ ສ່ວນຜູ້ທີ່ເປັນໃຫຍ່ໃນພວກເຈົ້າ ຜູ້ນັ້ນຊິເປັນຜູ້ຮັບໃຊ້ຂອງພວກເຈົ້າ
23:12 ຄື ຜູ້ທີ່ຍົກໂຕຂຶ້ນ ຜູ້ນັ້ນຊິຕ້ອງເຮັດໃຫ້ຖ່ອມລົງ ກັບຜູ້ທີ່ຖ່ອມໂຕລົງ ຜູ້ນັ້ນຊິ
ໄດ້ຮັບການຍົກຂຶ້ນ
23:13 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຜູ້ໜ້າຊື່ໃຈຄົດເອີຍ ຄື
ພວກເຈົ້າປິດປະຕູລາຊະອານາຈັກສະຫວັນໄວ້ຈາກຄົນ ຄືພວກເຈົ້າເອງກໍບໍ່ຍອມ
ເຂົ້າໄປ ແລ້ວບັດຜູ້ອື່ນ ຢາກຊິເຂົ້າໄປ ພວກເຈົ້າກໍກີດກັນຂວາງທາງໄວ້
23:14 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ພວກເຈົ້າຖືເອົາກືນເອົາເຮືອນຂອງແມ່ໝ້າຍ ກັບແກ້ງອະທິຖານເວົ້ານຳພຣະເຈົ້າ
ເປັນຄຳຍືດຍາວ ຈັ່ງຊັ້ນພວກເຈົ້າຊິໄດ້ຖືກການລົງໂທດແຮງໜັກກວ່າ
23:15 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ພວກເຈົ້າເລາະໄປເລາະມາຕາມທະເລກັບແຜ່ນດິນ ເພື່ອຊິໄດ້ແມ່ນແຕ່ຄົນດຽວ
ໃຫ້ຮັບເຂົ້ານຳພວກເຈົ້າ ບັດໄດ້ແລ້ວພວກເຈົ້າກໍເຮັດໃຫ້ເຂົາກາຍເປັນລູກນະລົກ
ສອງເທົ່າກວ່າພວກເຈົ້າອີກ
23:16 ລະວັງພິນາດເດີ້ ພວກຜູ້ນຳທີ່ໂຕເອງຕາບອດ ພວກເຈົ້າມັກເວົ້າວ່າ 'ຜູ້ໃດຊິ
ກ່າວຄຳສາບານໂດຍອ້າງພຣະວິຫານ ຄຳສາບານນັ້ນບໍ່ສັກສິດ ແຕ່ຜູ້ໃດຊິກ່າວ
ຄຳສາບານໂດຍອ້າງທອງຄຳໃນພຣະວິຫານ ຄຳສາບານແນວນັ້ນສັກສິດມີການ
ຜູກມັດອີຫລີ'
23:17 ພວກຄົນໂງ່ຄົນຕາບອດເອີຍ ອັນໃດສຳຄັນກວ່າ ທອງຄຳ ຫລືພຣະວິຫານທີ່
ເຮັດໃຫ້ທອງຄຳສັກສິດ

23:18 ກັບພວກເຈົ້າມັກຊິເວົ້າວ່າ 'ຜູ້ທີ່ສາບານໂດຍອ້າງແທ່ນບູຊາ ຄຳສາບານນັ້ນ
ບໍ່ສັກສິດ ແຕ່ຜູ້ທີ່ສາບານໂດຍອ້າງເຄື່ອງຖວາຍເທິງແທ່ນບູຊານັ້ນ ຄຳສາບານ
ແນວນັ້ນສັກສິດມີການຜູກມັດອີຫລີ'
23:19 ພວກຄົນໂງ່ຄົນຕາບອດເອີຍ ອີຫຍັງຊິສຳຄັນກວ່າ ເຄື່ອງຖວາຍ ຫລືແທ່ນບູ-
ຊາທີ່ເຮັດໃຫ້ເຄື່ອງຖວາຍນັ້ນສັກສິດ
23:20 ຈັ່ງຊັ້ນ ຜູ້ທີ່ສາບານໂດຍອ້າງແທ່ນບູຊາ ຄຳສາບານນັ້ນກໍຮ່ວມທັງແທ່ນບູຊາ
ພ້ອມທັງໝົດຄູ່ແນວທີ່ຢູ່ເທິງແທ່ນບູຊານັ້ນນຳ
23:21 ແລ້ວຜູ້ທີ່ສາບານໂດຍອ້າງພຣະວິຫານ ຄຳສາບານນັ້ນກໍຮ່ວມທັງພຣະວິ-
ຫານ ພ້ອມທັງຜູ້ເພິ່ນທີ່ສະຖິດໃນພຣະວິຫານນັ້ນນຳ
23:22 ແລ້ວຜູ້ທີ່ສາບານໂດຍອ້າງສະຫວັນ ກໍສາບານໂດຍອ້າງບັນລັງຂອງພຣະ-
ເຈົ້າກັບອ້າງໂດຍເພິ່ນຜູ້ທີ່ນັ່ງຢູ່ບັນລັງນັ້ນນຳ
23:23 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ພວກເຈົ້າຖວາຍສິບຕໍ່ຮ້ອຍຂອງແນວຈຸກໆຈິກໆ ຄືຜັກຫອມລາບ ຜັກຊີ ກັບຂີ້ມີ້ນ
ແນວໝູ່ນີ້ພວກເຈົ້າຄວນຊິເຮັດຢູ່ ແຕ່ສ່ວນຂໍ້ສຳຄັນໃນກົດບັນຍັດນັ້ນ ຄືຄວາມ-
ຍຸດຕິທຳ ຄວາມເມດຕາ ຄວາມເຊື່ອ ພວກເຈົ້າຄວນຊິເຮັດຄືກັນໂດຍບໍ່ຫລົງລືມ
ລະເວັ້ນ
23:24 ພວກຜູ້ນຳທີ່ໂຕເອງຕາບອດ ພວກເຈົ້າພະຍາຍາມຕອງຮີ້ນອອກ ແຕ່ຍັງກືນ
ໂຕອູດລົງໄປ
23:25 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ເຈົ້າລ້າງຈອກຊາມແຕ່ທາງນອກ ແຕ່ສ່ວນໃນຂອງຈອກຊາມນັ້ນກໍຍັງເປື້ອນດ້ວຍ
ການປຸ້ນກັບການມົວເມົາລ່ວງເກີນ
23:26 ພວກ ຟາຣີຊາຍ ທີ່ໂຕເອງຕາບອດ ໃຫ້ລ້າງແນວເປື້ອນຢູ່ໃນຈອກຊາມອອກ
ຊະກ່ອນ ເພື່ອທາງນອກຊິໄດ້ສະອາດງາມໄປນຳ
23:27 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ເຈົ້າເປັນຄືອຸບໂມງຝັງສົບຊຶ່ງທາສີດ້ວຍປູນຂາວ ທາງນອກເບິ່ງຄືງາມອີຫລີ ແຕ່
ທາງໃນມີແຕ່ກະດູກສົບກັບແນວສົກກະປົກທັງໝົດ

23:28 ພວກເຈົ້າກໍເປັນຈັ່ງຊັ້ນເນາະ ທາງນອກນັ້ນເບິ່ງຊື່ຄືເປັນຄົນທ່ຽງທຳອັນຖືກ
ຕ້ອງ ແຕ່ທາງໃນພວກເຈົ້າມີແຕ່ຄວາມໜ້າຊື່ໃຈຄົດກັບຄວາມຊົ່ວຊ້າເລວຊາມ
23:29 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ຄົນໜ້າຊື່ໃຈຄົດເອີຍ ຄື
ພວກເຈົ້າກໍ່ສ້າງອຸບໂມງຝັງສົບຂອງພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ
ແລ້ວຕົກແຕ່ງອຸບໂມງຝັງສົບຂອງຜູ້ທ່ຽງທຳນັ້ນໃຫ້ງົດງາມ
23:30 ແລ້ວຈັ່ງເວົ້າວ່າ 'ຄັ່ນເຮົາໄດ້ຢູ່ໃນສະໄໝພວກພໍ່ຕະກູນຂອງເຮົານັ້ນ ເຮົາຊິບໍ່
ມີສ່ວນຮ່ວມກັບຄົນທີ່ເຮັດໃຫ້ເລືອດຂອງພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ
ຕົກດອກ'
23:31 ຈັ່ງຊັ້ນ ພວກເຈົ້າກໍເປັນພະຍານຟ້ອງໃສ່ເຈົ້າຂອງວ່າ ໂຕເອງເປັນລູກຫລານ
ຂອງຜູ້ທີ່ໄດ້ຂ້າຜູ້ເປັນປາກເປັນສຽງຂອງພຣະເຈົ້ານັ້ນ
23:32 ຈັ່ງຊັ້ນ ໃຫ້ພວກເຈົ້າເຮັດຕາມແນວທີ່ພໍ່ຕະກູນຂອງເຈົ້າໄດ້ເຮັດນັ້ນ ໃຫ້ຄົບ-
ຖ້ວນຊະເດີ້
23:33 ໄອ້ພວກງູ ໄອ້ຊາດງູພິດຮ້າຍເອີຍ ເຈົ້າຊິພົ້ນການຕັດສິນລົງໂທດໃນນະລົກ
ໄດ້ຈັ່ງໃດ
23:34 ນີ້ແຫລະ ຕອນທີ່ເຮົາເຄີຍໃຊ້ພວກຜູ້ເປັນປາກເປັນສຽງ ພວກນັກປັດຊະຍາ
ກັບນັກທຳໄປຫາພວກເຈົ້າ ພວກເຈົ້າກໍເລີຍຂ້າຖິ້ມແດ່ ຄຶງທີ່ໄມ້ກາງແຂນແດ່
ຄ້ຽນຕີໃນສາລາທຳຂອງເຈົ້າແດ່ ຂົ່ມເຫງໄລ່ໄປຕາມເມືອງຕ່າງໆ ແດ່
23:35 ຈັ່ງຊັ້ນ ເລືອດຂອງຜູ້ທ່ຽງທຳອັນຖືກຕ້ອງ ຊຶ່ງພວກເຈົ້າເຮັດໃຫ້ຕົກເທິງແຜ່ນ-
ດິນໂລກ ນັບຕັ້ງແຕ່ເລືອດ ອາເບນ ຜູ້ທ່ຽງທຳນັ້ນ ຮອດເລືອດ ຊາຂາຣີຢາ ລູກ-
ຊາຍ ເບາເຣກີຢາ ຜູ້ທີ່ພວກເຈົ້າໄດ້ຂ້າໃນລະຫວ່າງພຣະວິຫານກັບແທ່ນບູຊານັ້ນ
ກໍຂໍໃຫ້ຕົກໃສ່ຫົວຂອງພວກເຈົ້າໝົດ ໂລດ ເດີ້
23:36 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ວິບັດແນວໝູ່ນີ້ຊິຕົກຢູ່ກັບຄົນ
ໃນຍຸກນີ້ທັງໝົດ
23:37 ໂອ້ ເຢຣູຊາເລັມ ໆ ເອີຍ ເມືອງທີ່ໄດ້ຂ້າພວກຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າ ກັບຂວ້າງຫີນປະຫານຜູ້ຮັບໃຊ້ທີ່ພຣະເຈົ້າໃຊ້ມາຫາເຈົ້າ ເຮົາຢາກຊິ

ຕຸ້ມໂຮມພວກລູກໆ ຂອງເຈົ້າໄວ້ ຄືແມ່ໄກ່ກົກລູກຢູ່ໃຕ້ປີກຂອງມັນ ແຕ່ພວກເຈົ້າ
ບໍ່ຍອມເລີຍ
23:38 ນີ້ແຫລະ 'ບ້ານເມືອງຂອງເຈົ້າຊິຖືກໂຜດ ປະຖິ້ມໃຫ້ຮົກຮ້າງໄປ'
23:39 ຄື ເຮົາບອກພວກເຈົ້າວ່າ ເຈົ້າຊິບໍ່ເຫັນເຮົາອີກດອກ ຈົນກວ່າຊິໂຮຮ້ອງກັນ
ວ່າ 'ຂໍຊົງພຣະຈະເລີນໆ ເພິ່ນຜູ້ມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ'"

## ມັດທາຍ ບົດທີ 24

24:1 ສ່ວນ ພຣະເຢຊູ ໄດ້ອອກຈາກພຣະວິຫານ ແລ້ວພວກລູກສິດຂອງເພິ່ນມາຊີ້
ພວກຕຶກຂອງພຣະວິຫານໃຫ້ເພິ່ນເບິ່ງ
24:2 ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ "ເຫັນແນະ ຕຶກແນວໝູ່ນີ້ ເຮົາຊິບອກຄວາມຈິງ
ໃຫ້ພວກເຈົ້າ ໂລດ ວ່າ ສິລາທີ່ຊ້ອນທັບກັນຢູ່ນີ້ ມັນຊິຖືກທຳລາຍໃຫ້ພັງກະຈາຍ
ໄປໝົດ ຈົນກວ່າຊິບໍ່ມີຈັກກ້ອນທີ່ຍັງຊ້ອນທັບກັນຢູ່"
24:3 ບັດ ພຣະເຢຊູ ພວມນັ່ງຢູ່ເທິງພູເຂົາໝາກກອກເທດ ພວກລູກສິດມາຫາເພິ່ນ
ເປັນສ່ວນໂຕເວົ້າວ່າ "ຊ່ອຍບອກພວກຜູ້ຂ້າໃຫ້ຮູ້ຈັກແໜ່ ວ່າເຫດການແນວໝູ່ນີ້ຊິ
ເກີດຂຶ້ນຍາມໃດ ກັບຊິມີເຄື່ອງໝາຍສຳຄັນແບບໃດທີ່ຊິບົ່ງບອກເຖິງການຫລິບ
ມາຂອງທ່ານ ກັບການຈົບລົງຂອງໂລກນີ້"
24:4 ພຣະເຢຊູ ຕອບເຂົາວ່າ "ລະວັງໃຫ້ດີເດີ້ ຢ່າໃຫ້ຜູ້ໃດລໍ້ລວງເຈົ້າໃຫ້ຫລົງ
24:5 ຄື ຊິມີຫລາຍຄົນມາໃນນາມຂອງເຮົາ ຫາວ່າ 'ເຮົານີ້ເປັນ ພຣະຄຣິດ ນັ້ນ'
ແລ້ວເຂົາຊິລໍ້ລວງຫລາຍຄົນໃຫ້ຫລົງໄປ
24:6 ແລ້ວ ບັດພໍພວກເຈົ້າໄດ້ຍິນຂ່າວລືເຖິງວ່າມີສົງຄາມຢູ່ໝ້ອງນັ້ນ ຢູ່ໝ້ອງນີ້ ບໍ່
ໃຫ້ຕົກໃຈຢ້ານເລີຍເດີ້ ຄືວ່າແນວໝູ່ນີ້ຊິຕ້ອງເປັນໄປກ່ອນ ແຕ່ສຸດປາຍນັ້ນຍັງບໍ່
ທັນມາຮອດມາເຖິງ
24:7 ຄື ປະຊາຊາດຊິລຸກຂຶ້ນຕໍ່ສູ້ປະຊາຊາດ ລາຊະອານາຈັກຊິຕໍ່ສູ້ລາຊະອານາຈັກ
ທັງຊິເກີດການອຶດຢາກຫິວໂຫຍ ກັບຊິເກີດພະຍາດລະບາດຢ່າງຮ້າຍແຮງ ກັບຊິ
ເກີດແຜ່ນດິນໄຫວໃນໝ້ອງຕ່າງໆ
24:8 ເຫດການແນວໝູ່ນີ້ທັງໝົດ ຊິເປັນຂັ້ນທຳອິດຂອງຍາມໂສກເສົ້າຢ່າງຮ້າຍ
ແຮງ

24:9 ແລ້ວໃນຍາມນັ້ນ ພວກເຂົາຊິມອບພວກເຈົ້າໄວ້ໃນຂັ້ນທຸກຍາກລຳບາກ ກັບຊິ
ຂ້າເຈົ້າ ແລ້ວຄູ່ປະຊາຊາດຊິຊັງພວກເຈົ້າຍ້ອນເຫັນແກ່ນາມຂອງເຮົາ
24:10 ແລ້ວໃນຍາມນັ້ນ ຄົນຫລວງຫລາຍຊິສະດຸດໃຈ ແລ້ວຊິທໍລະຍົດຕໍ່ກັນ ກັບ
ກຽດຊັງກັນ
24:11 ແລ້ວຊິມີຜູ້ພະຍາກອນບໍ່ຈິງຫລາຍຄົນເກີດຂຶ້ນ ແລ້ວເຂົາຊິລໍ້ລວງຄົນຫລາຍ
ຄົນໃຫ້ຫລົງ
24:12 ແລ້ວຄວາມຮັກຂອງຫລາຍຄົນຊິຈືດຈາງລົງ ຍ້ອນຄວາມຊົ່ວຊ້າເລວຊາມຊິ
ທະວີຫລາຍຂຶ້ນ
24:13 ແຕ່ຜູ້ທີ່ທົນເອົາໄດ້ຈົນເຖິງທີ່ສຸດ ຜູ້ນັ້ນຊິລອດພົ້ນໄດ້
24:14 ແລ້ວຂ່າວດີອັນປະເສີດເລື່ອງລາຊະອານາຈັກນີ້ ຊິປະກາດໄປຮອດທົ່ວໂລກ
ໃຫ້ເປັນຄຳພະຍານ *ເຖິງເຮົາ* ຕໍ່ພວກປະຊາຊາດ ແລ້ວໃນຍາມນັ້ນເນາະ ການ-
ຈົບລົງ *ຂອງໂລກ* ຊິມາຮອດມາເຖິງ
24:15 ຈັ່ງຊັ້ນ ບັດພວກເຈົ້າເຫັນສິ່ງທີ່ເປັນຕາຊັງນັ້ນມາ ຕັ້ງໂຕຢືນຢູ່ໃນສະຖານ
ສັກສິດບໍລິສຸດ *ຂອງພຣະເຈົ້າ* ເປັນຜູ້ຊຶ່ງເຮັດໃຫ້ໂລກເກີດການຮົກຮ້າງຫວ່າງບໍ່"
ແມ່ນຜູ້ນັ້ນເນາະທີ່ ດານິເອນ ຜູ້ເປັນປາກເປັນສຽງຂອງພຣະເຈົ້າໄດ້ກ່າວເຖິງ (ຜູ້-
ໃດທີ່ໄດ້ອ່ານກໍໃຫ້ຜູ້ນັ້ນເຂົ້າໃຈເດີ້)
24:16 "ບັດຍາມນັ້ນມາຮອດ ໃຫ້ຜູ້ທີ່ຢູ່ໃນແຄວ້ນ ຢູດາຍ ຟ້າວໜີໄປຢູ່ພູເຂົາ ໂລດ
ເດີ້
24:17 ແລ້ວຢ່າໃຫ້ຜູ້ທີ່ຢູ່ເທິງດາດຟ້າຫຼັງຄາເຮືອນ ລົງມາເກັບເຂົ້າຂອງໃດໆ ອອກ-
ຈາກເຮືອນຂອງໂຕເດີ້
24:18 ແລ້ວຝ່າຍຜູ້ທີ່ຢູ່ຕາມທົ່ງນາ ຢ່າໃຫ້ຫລົບເມືອເພື່ອເກັບເອົາເສື້ອຜ້າໜ້າແພ
ຂອງໂຕເດີ້
24:19 ແລ້ວລະວັງພິບາດໃນມື້ນັ້ນເດີ້ ຍິງຜູ້ມີທ້ອງກັບຍິງຜູ້ມີລູກອ່ອນກິນນົມຢູ່
24:20 ແຕ່ໃຫ້ອະທິຖານຂໍນຳພຣະເຈົ້າວ່າ ຂໍຢ່າໃຫ້ມື້ທີ່ເຈົ້າຊິຕ້ອງໜີຫັ້ນ ເປັນລະດູ-
ໜາວ ຫລືກົງມື້ພັກງານຂອງ ຊາວຢິວ

24:21 ຄືໃນຍາມນັ້ນຊິເກີດການທຸກຍາກແສນສາຫັດອັນໃຫຍ່ຫລວງຂຶ້ນມາ ຢ່າງທີ່
ບໍ່ເຄີຍມີມາຈັກເທື່ອ ຕັ້ງແຕ່ໄດ້ສ້າງໂລກມາຈົນຮອດມື້ທີ່ຊິມາເຖິງນັ້ນ ກັບຊິບໍ່ມີຕໍ່-
ໄປອີກເລີຍ
24:22 ແລ້ວນອກຈາກນີ້ນັ້ນຍາມນັ້ນຊິຢັ້ນສັ້ນເຂົ້າມາ ຊິບໍ່ມີໃຜລອດມາໄດ້ເລີຍ ແຕ່
ຍ້ອນເຫັນແກ່ຜູ້ທີ່ຢູ່ໃນຂອບເຂດການທີ່ພຣະເຈົ້າເລືອກໄວ້ນັ້ນ ມອນມື້ນັ້ນກໍຊິ
ຢັ້ນສັ້ນເຂົ້າມາ
24:23 ແລ້ວຕອນນັ້ນ ຄັ່ນມີໃຜຊິບອກພວກເຈົ້າວ່າ 'ນີ້ແຫລະ ພຣະຄຣິດ ຢູ່ໜ້ອງ
ນັ້ນໜ້ອງນີ້' ຢ່າເຊື່ອເດັດຂາດເລີຍ
24:24 ຍ້ອນວ່າ ຊິມີພຣະຄຣິດປອມ ກັບຜູ້ພະຍາກອນບໍ່ຈິງເກີດຂຶ້ນຫລາຍລາຍ ກັບ
ຊິມີເຄື່ອງໝາຍສຳຄັນອັນໃຫຍ່ຫລວງ ກັບແນວເປັນຕາງຶດຕ່າງໆ ໄດ້ເກີດຂຶ້ນ
ຈົນກວ່າຄັ່ນເປັນໄປໄດ້ ແມ່ນແຕ່ໝູ່ພວກຜູ້ທີ່ພຣະເຈົ້າເລືອກໄວ້ນັ້ນ ອາດ ຊິຖືກ
ລໍ້ລວງໄດ້ນຳ
24:25 ນີ້ແຫລະ ເຮົາໄດ້ບອກພວກເຈົ້າໄວ້ກ່ອນແລ້ວເດີ້
24:26 ຈັ່ງຊັ້ນ ຄັ່ນໃຜຊິບອກພວກເຈົ້າວ່າ 'ນີ້ແຫລະ ເພິ່ນຢູ່ໃນຖິ່ນແຫ້ງແລ້ງ' ກໍຢ່າ
ອອກໄປຫາເດີ້ ຫລືຊິວ່າ 'ນີ້ແຫລະ ເພິ່ນຢູ່ໃນຫ້ອງລັບນັ້ນ' ກໍຢ່າເຊື່ອເລີຍ
24:27 ຄືວ່າ ບັດສາຍຟ້າແມບຢູ່ທາງຕະເວັນອອກ ໄດ້ສ່ອງແສງຈ້າເຫັນຮອດຕະ-
ເວັນຕົກຈັ່ງໃດ ການຫລົບມາຂອງເຮົາ ຜູ້ເປັນບຸດມະນຸດ ກໍຊິເປັນຈັ່ງຊັ້ນ
24:28 ຄືວ່າຊາກສົບຊິຢູ່ໜ້ອງໃດ ຝູງນົກອີແຮ້ງກໍຊິເວີ່ນລຸ່ມລ້ອມຢູ່ໜ້ອງນັ້ນ
24:29 ແຕ່ພໍຍາມທຸກຍາກແສນສາຫັດອັນໃຫຍ່ຫລວງນັ້ນຈົບລົງແລ້ວ 'ຕະເວັນຊິ
ມືດໄປ ດວງເດືອນຊິບໍ່ສ່ອງແສງ ດວງດາວຊິຕົກລົງມາຈາກຟ້າ ແລ້ວອຳນາດໃດ
ໆ ໃນຟ້າສະຫວັນກໍຊິຖືກສັ່ນສະເທືອນສະທ້ານຢ່າງແຮງ'
24:30 ຍາມນັ້ນພໍດີ ເຄື່ອງໝາຍສຳຄັນຂອງເຮົາຜູ້ເປັນບຸດມະນຸດ ຊິປາກົດຂຶ້ນຢູ່
ເທິງຟ້າສະຫວັນ 'ແລ້ວຜູ້ຄົນຄູ່ຕະກູນໝົດທົ່ວໂລກຊິໂສກເສົ້າໄວ້ທຸກ' ແລ້ວວາງ-
ຫັ້ນເຂົາຊິເຫັນເຮົາຜູ້ເປັນບຸດມະນຸດນັ້ນ ລົງມາໃນເມກຢູ່ເທິງທ້ອງຟ້າ ປະກອບ
ດ້ວຍລິດທານຸພາບກັບສະຫງ່າລາສີອັນໃຫຍ່ຫລວງ

24:31 ແລ້ວເພິ່ນຊິໃຊ້ໝູ່ເທວະທູດຂອງເພິ່ນມາພ້ອມສຽງແກອັນໂດ່ງດັ່ງ ມາຕຸ້ມ-
ໂຮມໝູ່ພວກຜູ້ທີ່ຢູ່ໃນການທີ່ພຣະເຈົ້າເລືອກໄວ້ຂອງເພິ່ນ ອອກຈາກເຂັມຊີ້ທິດ
ທັງສີ່ ຈາກສຸດທ້ອງຟ້າຟາກນີ້ຈົນຮອດສຸດທ້ອງຟ້າຟາກພູ້ນ
24:32 ບັດນີ້ ໃຫ້ຮຽນຮູ້ໃນຄຳປຽບທຽບເລື່ອງຕົ້ນໝາກເດື່ອ ບັດງ່າມັນຍັງອ່ອນອ່ອນ
ກັບພວມຊິແຕກໃບແລ້ວ ພວກເຈົ້າກໍຮູ້ກັນວ່າລະດູຮ້ອນໃກ້ຊິມາຮອດແລ້ວ
24:33 ໃນທຳນອງດຽວກັນ ບັດພວກເຈົ້າເຫັນເຫດການແນວໝູ່ນີ້ເປັນໄປແລ້ວ ໃຫ້ຮູ້
ກັນວ່າການສະເດັດມານັ້ນໃກ້ຊິມາຮອດແລ້ວ ດີບໍ່ດີກໍຢູ່ໜ້າປະຕູແລ້ວ
24:34 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ຊົ່ວອາຍຸຂອງຄົນ *ທີ່ເຮົາເວົ້າ* ນີ້
ຊິບໍ່ໄດ້ລ່ວງໄປຈົນກວ່າແນວໝູ່ນີ້ທັງໝົດຊິເປັນໄປດ້ວຍຄວາມສຳເລັດ
24:35 ຄືວ່າ ຟ້າສະຫວັນກັບແຜ່ນດິນໂລກຊິລ່ວງໄປ ແຕ່ຖ້ອຍຄຳຂອງເຮົາຊິບໍ່ຜ່ານ
ພົ້ນລ່ວງໄປຈັກເທື່ອເລີຍ
24:36 ແຕ່ມື້ນັ້ນ ໂມງນັ້ນ *ທີ່ເຮົາຊິມາ* ບໍ່ມີໃຜຮູ້ຈັກນຳ ແມ່ນແຕ່ພວກເທວະທູດໃນ
ສະຫວັນກໍບໍ່ຮູ້ຈັກ ມີແຕ່ພຣະເຈົ້າຜູ້ເປັນພໍ່ຂອງເຮົາທີ່ຮູ້ຈັກ
24:37 ຄືສະໄໝຂອງ ໂນເອ ເປັນຈັ່ງໃດ ບັດເຮົາຜູ້ເປັນບຸດມະນຸດຫລົບມາ ກໍຊິເປັນ
ຈັ່ງຊັ້ນຄືກັນ
24:38 ໂດຍວ່າ ກ່ອນມື້ນ້ຳທ່ວມນັ້ນ ຄົນທັງຫລາຍມີແຕ່ກິນກັບດື່ມກັນ ແຕ່ງງານຍົກ
ໃຫ້ເປັນຜົວເມຍກັນ ຈົນຮອດມື້ທີ່ ໂນເອ ເຂົ້າໃນເຮືອໃຫຍ່
24:39 ໃນວາງຫັ້ນ ຄົນບໍ່ຮູ້ເມື່ອໂຕວ່າອີຫຍັງຊິມາ ຈົນກວ່ານ້ຳມາທ່ວມ ພັດພາເອົາ
ພວກເຂົາໄປໝົດ ແລ້ວບັດຍາມເຮົາຜູ້ເປັນບຸດມະນຸດຊິມານັ້ນ ມັນກໍຊິເປັນຈັ່ງຊັ້ນ
ຄືກັນ
24:40 ແຕ່ໃນຍາມທີ່ຊິມານັ້ນ ຊິມີສອງຄົນຢູ່ທົ່ງນານຳກັນ ຄົນໜຶ່ງຊິຖືກຮັບໄປ ກັບ
ອີກຄົນໜຶ່ງຊິຍັງຢູ່
24:41 ແລ້ວຊິມີຍິງສອງຄົນ ພວມຊິໂມ້ແປ້ງຢູ່ທີ່ໂມ້ ຄົນໜຶ່ງຊິຖືກຮັບໄປ ກັບອີກຄົນ
ໜຶ່ງຊິຍັງຢູ່
24:42 ຈັ່ງຊັ້ນ ໃຫ້ລະວັງຢູ່ເດີ້ ຍ້ອນພວກເຈົ້າບໍ່ຮູ້ວ່າອົງພຣະຜູ້ເປັນເຈົ້າຂອງເຈົ້າຊິ
ມາໃນຍາມໃດ

24:43 ແຕ່ໃຫ້ຮູ້ກັນໄວ້ເດີ້ ຄັນວ່າເຈົ້າຂອງເຮືອນຮູ້ໄວ້ລ່ວງໜ້າວ່າ ຂະໂມຍຊິມາ
ຍາມໃດ ເຂົາກໍຊິລະວັງໄວ້ດີໆ ບໍ່ຍອມໃຫ້ເຮືອນ ລາວ ຖືກບຸກລຸກເຂົາໄປປຸ້ນໄດ້
24:44 ຈັ່ງຊັ້ນ ພວກເຈົ້າໃຫ້ກຽມໂຕໄວ້ໃຫ້ພ້ອມຄືກັນ ຍ້ອນໃນໂມງທີ່ເຈົ້າບໍ່ຄຶດບໍ່ຝັນ
ນັ້ນ ເຮົາຜູ້ເປັນບຸດມະນຸດຊິມາ ໂລດ
24:45 ບັດນີ້ ໃຜເປັນຜູ້ຮັບໃຊ້ທີ່ຈິງຮັກພັກດີກັບມີສະຕິປັນຍາ ທີ່ນາຍໄດ້ຕັ້ງໄວ້ເບິ່ງ-
ແຍງຄົນໃນຄົວເຮືອນຂອງນາຍ ແລ້ວກໍລ້ຽງອາຫານການກິນໃຫ້ເຂົາຕາມເວລາ
24:46 ຜູ້ຮັບໃຊ້ຜູ້ນັ້ນກໍຊິໄດ້ພົບເປັນສຸກ ບັດຍາມນາຍຂອງເຂົາມາພົ້ມາເຫັນວ່າເຂົາ
ພວມເຮັດຈັ່ງຊັ້ນ
24:47 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ນາຍນັ້ນຊິຕັ້ງຄົນໃຊ້ຜູ້ນັ້ນໄວ້
ໃຫ້ເບິ່ງແຍງພວກເຂົ້າຂອງເຄື່ອງໃຊ້ຂອງ ລາວ ໝົດຄູ່ແນວ
24:48 ແຕ່ຄັນວ່າ ຜູ້ຮັບໃຊ້ຊົ່ວຊິຄຶດໃນໃຈວ່າ ‘ນາຍຂອງຂ້າຄືຊິບໍ່ໄດ້ມາງ່າຍດອກ’
24:49 ແລ້ວຊິຕັ້ງຕົ້ນເລີ່ມຄຽ່ງຕີໝູ່ຜູ້ຮັບໃຊ້ ກັບຊິກິນດື່ມຮວມກັນສຸມຢູ່ກັບພວກຂີ້-
ເມົາ
24:50 ນາຍຂອງຜູ້ຮັບໃຊ້ຜູ້ນັ້ນຊິມາໃນມື້ທີ່ເຂົາບໍ່ຄາດຄຶດ ແລ້ວໃນໂມງທີ່ເຂົາບໍ່ຮູ້
ເມື່ອ
24:51 ພໍຮອດແລ້ວ ນາຍກໍຊິລົງໂທດເຂົາຢ່າງຮ້າຍແຮງ ແລ້ວໃຫ້ເຂົາມີຫຸ້ນສ່ວນກັບ
ພວກໜ້າຊື່ໃຈຄົດ ຊຶ່ງໃນໜ້ອງນັ້ນມີແຕ່ການຮ້ອງໄຫ້ກັດແຂ້ວຢູ່ຕະຫລອດ”

## ມັດທາຍ ບົດທີ 25

25:1 “ໃນຍາມນັ້ນ ລາຊະອານາຈັກສະຫວັນຊິປຽບຄືຍິງພົມມະຈາລີສິບຄົນ ທີ່ຖື
ຕະກຽງຂອງໂຕອອກໄປຕ້ອນຮັບເອົາເຈົ້າບ່າວ
25:2 ໃນພວກນາງນັ້ນ ຫ້າຄົນມີປັນຍາດີ ແລ້ວອີກຫ້າຄົນກໍເບົາປັນຍາ
25:3 ພວກທີ່ເບົາປັນຍານັ້ນກໍເອົາຕະກຽງຂອງໂຕໄປ ແຕ່ບໍ່ໄດ້ເອົານໍ້າມັນໄປນໍາ
25:4 ແຕ່ຄົນທີ່ມີປັນຍານັ້ນໄດ້ເອົານໍ້າມັນໃສ່ຂວດໄປພ້ອມຕະກຽງຂອງເຂົາ
25:5 ບັດເຈົ້າບ່າວມາຊ້າ ພວກນາງນັ້ນກໍພາກັນງ້ວງເຫງົາຫາວນອນເລີຍຫລັບໄປ
25:6 ບັດຮອດທ່ຽງຄືນກໍມີການຮ້ອງປະກາດວ່າ ‘ນີ້ແຫລະ ເຈົ້າບ່າວມາແລ້ວໆ ໃຫ້
ອອກໄປຕ້ອນຮັບເອົາເພິ່ນເດີ້’

25:7 ແລ້ວພວກຍິງພົມມະຈາລີນັ້ນ ໄດ້ລຸກຂຶ້ນຕົກແຕ່ງໄສ້ຕະກຽງຂອງໂຕໄວ້
25:8 ແຕ່ພວກທີ່ເບົາປັນຍານັ້ນກໍເວົ້າກັບພວກທີ່ມີປັນຍາວ່າ ‘ຂໍແບ່ງປັນນໍ້າມັນຂອງ
ເຈົ້າໃຫ້ພວກເຮົາແໜ່ ຍ້ອນຕະກຽງຂອງເຮົາມອດໄປແລ້ວ’
25:9 ແຕ່ພວກທີ່ມີປັນຍາຕອບວ່າ ‘ບໍ່ໄດ້ແລ້ວ ຢ້ານວ່າຄັ່ນແບ່ງປັນໃຫ້ພວກເຈົ້ານຳ
ນໍ້າມັນຂອງພວກເຮົາຊິບໍ່ພໍໃຊ້ ໃຫ້ໄປຫາຊື້ເອົາເອງຈາກຜູ້ຂາຍຊະ
25:10 ບັດພວກນາງທີ່ເບົາປັນຍາພວມໄປຊື້ນໍ້າມັນນັ້ນ ພໍດີເຈົ້າບ່າວມາຮອດ ພວກ
ນາງຜູ້ທີ່ພ້ອມແລ້ວ ຈັ່ງໄດ້ເຂົ້າໄປຮ່ວມໃນພິທີແຕ່ງງານກັບເຈົ້າບ່າວນັ້ນ ແລ້ວ
ປະຕູກໍຖືກປິດໄວ້
25:11 ຢູ່ມາ ພໍພວກຍິງພົມມະຈາລີອັນເບົາປັນຍາໄດ້ຫລົບມາແລ້ວ ເຂົາກໍຮ້ອງວ່າ
“ນາຍເຈົ້າຂ້າໆ ຂໍເປີດປະຕູໃຫ້ພວກຜູ້ຂ້າແໜ່ທ້ອນ”
25:12 ແຕ່ນາຍຕອບວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ເຮົາບໍ່ຮູ້ຈັກ
ພວກເຈົ້າດອກ”
25:13 ສະຫລຸບແລ້ວໃຫ້ພວກເຈົ້າລະວັງໄວ້ໃຫ້ດີເດີ້ ຍ້ອນວ່າພວກເຈົ້າບໍ່ຮູ້ຈັກມື້
ຫລືໂມງທີ່ເຮົາຜູ້ເປັນບຸດມະນຸດຊິໄດ້ຫລົບມາ
25:14 ແລ້ວລາຊະອານາຈັກສະຫວັນຍັງປຽບຄືຜູ້ຊາຍຜູ້ໜຶ່ງ ຊິອອກເດີນທາງໄປຍັງ
ເມືອງໄກໆ ຈັ່ງເອີ້ນພວກຜູ້ຮັບໃຊ້ຂອງ ລາວ ມາ ແລ້ວຝາກຊັບສົມບັດຂອງ ລາວ
ໄວ້ກັບພວກເຂົາ
25:15 ແລ້ວ ລາວ ໃຫ້ເງິນຄົນໜຶ່ງຫ້າຫລຽນຕາລັນຕົນ ອີກຄົນໜຶ່ງກໍໃຫ້ສອງຫລຽນ
ຕາລັນຕົນ ກັບອີກຄົນໜຶ່ງກໍໃຫ້ຕາລັນຕົນດຽວ ຕາມຄວາມສາມາດຂອງແຕ່ລະ
ຄົນ ແລ້ວນາຍກໍອອກເດີນທາງໄປ
25:16 ສ່ວນຜູ້ທີ່ໄດ້ຮັບເງິນຫ້າຕາລັນຕົນນັ້ນ ໄດ້ເອົາໄປຄ້າຂາຍ ຈັ່ງມີກຳໄລມາອີກ
ຫ້າຕາລັນຕົນ
25:17 ສ່ວນຜູ້ທີ່ໄດ້ຮັບເງິນສອງຕາລັນຕົນ ກໍໄດ້ກຳໄລອີກສອງຕາລັນຕົນຄືກັນ
25:18 ແຕ່ສ່ວນຜູ້ທີ່ໄດ້ຮັບເງິນຕາລັນຕົນດຽວ ກໍໄດ້ອອກໄປຝັງເງິນຂອງນາຍເຂົາ
ເຊື່ອງໄວ້
25:19 ຢູ່ມາດົນນານ ນາຍຈັ່ງຫລົບມາຄິດບັນຊີກັບຜູ້ຮັບໃຊ້ພວກນັ້ນ

25:20 ຜູ້ທີ່ໄດ້ຮັບເງິນຫ້າຕາລັນຕົນກໍເອົາເງິນກຳໄລອີກຫ້າຕາລັນຕົນມາຣາຍງານ
ວ່າ “ນາຍເຈົ້າຂ້າ ນາຍໄດ້ມອບເງິນຫ້າຕາລັນຕົນໄວ້ກັບຜູ້ຂ້າ ນີ້ແຫລະ ຜູ້ຂ້າໄດ້
ກຳໄລມາອີກຫ້າຕາລັນຕົນ”
25:21 ນາຍຈັ່ງຕອບເຂົາວ່າ “ເອີ້ ດີຫລາຍແລ້ວ ເຈົ້າເປັນຜູ້ຮັບໃຊ້ທີ່ດີກັບເປັນຄົນ
ຈິ່ງຮັກພັກດີເຊື່ອໃຈໄດ້ ຊຶ່ງເຈົ້າເຄີຍສັດຊື່ໃນຂອງນ້ອຍໆນັ້ນ ບັດນີ້ເຮົາຊິຕັ້ງເຈົ້າ
ໃຫ້ເປັນຜູ້ເບິ່ງແຍງ ເໜືອຫລາຍອັນຫລາຍແນວ ເຊີນເຂົ້າຮ່ວມໃນຄວາມສຸກຂອງ
ນາຍເຈົ້າເດີ້”
25:22 ຄົນທີ່ໄດ້ຮັບເງິນສອງຕາລັນຕົນກໍໄດ້ມາຣາຍງານວ່າ “ນາຍເຈົ້າຂ້າ ນາຍໄດ້
ມອບເງິນສອງຕາລັນຕົນໄວ້ກັບຜູ້ຂ້າ ນີ້ແຫລະ ຜູ້ຂ້າໄດ້ກຳໄລມາອີກສອງຕາລັນ-
ຕົນ”
25:23 ນາຍຈັ່ງຕອບເຂົາວ່າ “ເອີ້ ດີຫລາຍແລ້ວ ເຈົ້າເປັນຜູ້ຮັບໃຊ້ດີກັບເປັນຄົນຈິ່ງ-
ຮັກພັກດີເຊື່ອໃຈໄດ້ ຄືເຈົ້າໄດ້ສັດຊື່ໃນຂອງນ້ອຍໆນັ້ນ ນາຍກໍຊິຕັ້ງເຈົ້າໃຫ້ເບິ່ງ-
ແຍງ ເໜືອຂອງຫລາຍອັນຫລາຍແນວ ເຊີນເຂົ້າຮ່ວມໃນຄວາມສຸກຂອງນາຍເຈົ້າ
ເດີ້”
25:24 ບັດນີ້ ສ່ວນຄົນໃຊ້ທີ່ໄດ້ຮັບເງິນຕາລັນຕົນດຽວນັ້ນ ໄດ້ມາຣາຍງານວ່າ “ນາຍ
ເຈົ້າຂ້າ ຜູ້ຂ້າພໍຊິຮູ້ຈັກໃຈຂອງນາຍ ວ່າເປັນຄົນມີລະບຽບເຂັ້ມງວດກວດຂັນ ກ່ຽວ
ຜົນໃນໜ້ອງທີ່ນາຍບໍ່ໄດ້ຫວ່ານ ແລ້ວເກັບໃນໜ້ອງທີ່ນາຍບໍ່ໄດ້ຫວ່ານກ້າ
25:25 ຜູ້ຂ້າກໍເລີຍຢ້ານຈັ່ງເອົາເງິນຕາລັນຕົນດຽວຂອງນາຍນັ້ນ ໄປຝັງດິນເຊື່ອງໄວ້
ນີ້ແຫລະ ເງິນຂອງນາຍນີ້ ເອົາຄືນຊະ”
25:26 ນາຍຈັ່ງຕອບເຂົາວ່າ “ເຈົ້າຜູ້ຮັບໃຊ້ຊົ່ວຊ້າເລວຊາມກັບຂີ້ຄ້ານ ເຈົ້າຮູ້ຢູ່ວ່າ
ນາຍເຈົ້າກ່ຽວໃນໜ້ອງທີ່ນາຍບໍ່ໄດ້ຫວ່ານ ແລ້ວເກັບໃນໜ້ອງທີ່ນາຍບໍ່ໄດ້ຫວ່ານ-
ກ້າ
25:27 ຈັ່ງຊັ້ນ ຢ່າງນ້ອຍເຈົ້າຄວນເອົາເງິນຂອງນາຍໄປຝາກທະນາຄານໄວ້ ແລ້ວ
ບັດຫລັບມານາຍຊິໄດ້ເງິນຂອງນາຍພ້ອມດອກເບ້ຍນຳ
25:28 ຈັ່ງຊັ້ນ ໃຫ້ເອົາເງິນຕາລັນຕົນດຽວຈາກເຂົານັ້ນ ໄປໃຫ້ຄົນທີ່ມີເງິນສິບຕາ-
ລັນຕົນເດີ້

25:29 ຄືວ່າ ຄູ່ຄົນທີ່ມີຢູ່ແລ້ວ ຊິເພີ່ມເຕີມໃຫ້ຜູ້ນັ້ນ ໃຫ້ເຂົາມີຢ່າງສົມບູນເຫລືອເຟືອ
ແຕ່ຜູ້ທີ່ບໍ່ມີ ແມ່ນວ່າຊຶ່ງເຂົາມີຢູ່ກໍຊິຕ້ອງເອົາອອກຈາກເຂົາໄປ
25:30 ແລ້ວຝ່າຍຜູ້ຮັບໃຊ້ຜູ້ທີ່ບໍ່ເກີດຜົນປະໂຫຍດຫຍັງ ກໍໄປໂຍນລົງໃນທີ່ມືດອັນ
ເລິກທີ່ສຸດຢູ່ທາງນອກນັ້ນ ໝ້ອງທີ່ມີການຮ້ອງໄຫ້ກັດແຂ້ວຢູ່ຕະຫລອດ”
25:31 ບັດເຮົາຜູ້ເປັນບຸດມະນຸດຊິມາໃນສະຫງ່າລາສີຂອງເພິ່ນ ພ້ອມກັບໝູ່ເທວະ-
ທູດອັນບໍລິສຸດທັງປວງນຳ ຍາມນັ້ນເພິ່ນຊິນັ່ງຢູ່ບັນລັງອັນຮຸ່ງເຮືອງຂອງເພິ່ນ
25:32 ແລ້ວພວກປະຊາຊາດທັງຫລາຍ ຊິຕຸ້ມໂຮມຢູ່ຕໍ່ໜ້າ *(ບັນລັງຂອງ)* ເພິ່ນ
ແລ້ວເພິ່ນຊິຄັດເລືອກໃຫ້ອອກຈາກກັນ ຄືຈັ່ງຜູ້ລ້ຽງຄັດເລືອກແກະກັບແບ້ອອກ-
ຈາກກັນ
25:33 ແລ້ວເພິ່ນຊິຈັດເອົາແກະໄວ້ *ໝ້ອງມີກຽດ* ຢູ່ທາງຂວາຂອງເພິ່ນ ແຕ່ແບ້ນັ້ນຊິ
ຈັດໃຫ້ຢູ່ທາງຊ້າຍ
25:34 ແລ້ວໃນຍາມນັ້ນ ເພິ່ນຜູ້ເປັນກະສັດຊິບອກພວກຜູ້ຢູ່ທາງຂວາເພິ່ນວ່າ “ມາ
ຊະເດີ້ ເຈົ້າຜູ້ທີ່ໄດ້ຮັບພຣະພອນຈາກພຣະເຈົ້າຜູ້ເປັນພໍ່ຂອງເຮົາ ມາຮັບເອົາລາ-
ຊະອານາຈັກຊຶ່ງໄດ້ກຽມໄວ້ເປັນມໍລະດົກ ສຳລັບພວກເຈົ້າຕັ້ງແຕ່ໄດ້ສ້າງໂລກ
25:35 ຄືວ່າ ເຮົາເຄີຍຫິວ ແລ້ວເຈົ້າກໍໃຫ້ເຮົາກິນ ເຮົາເຄີຍກະຫາຍນ້ຳ ແລ້ວເຈົ້າກໍ
ໃຫ້ເຮົາດື່ມ ເຮົາເຄີຍເປັນຄົນແປກໜ້າ ແລ້ວເຈົ້າກໍຕ້ອນຮັບເຮົາເຂົ້າມາ
25:36 ເຮົາເຄີຍຂາດແນວນຸ່ງຫົ່ມ ແລ້ວເຈົ້າກໍເອົາເສື້ອຜ້າໃຫ້ເຮົານຸ່ງ ເຮົາເຄີຍເຈັບ-
ປ່ວຍ ແລ້ວເຈົ້າກໍມາຢ້ຽມຍາມເຮົາ ເຮົາເຄີຍຖືກຂັງຄຸກ ແລ້ວເຈົ້າກໍມາຫາເຮົາ”
25:37 ແລ້ວພວກຜູ້ທ່ຽງທຳນັ້ນຊິຖາມເພິ່ນວ່າ “ທ່ານເຈົ້າຂ້າ ຜູ້ຂ້າເຄີຍເຫັນທ່ານຫິວ
ຕອນໄດ໋ ແລ້ວເຄີຍຈັດແນວກິນມາໃຫ້ທ່ານຕອນໃດ ຫລືວ່າທ່ານເຄີຍກະຫາຍນ້ຳ
ແລ້ວຜູ້ຂ້າໄດ້ເອົານ້ຳໃຫ້ທ່ານດື່ມຕອນໃດ
25:38 ແລ້ວຜູ້ຂ້າເຄີຍເຫັນທ່ານເປັນຄົນແປກໜ້າຕອນໃດ ແລ້ວໄດ້ຕ້ອນຮັບທ່ານ
ເຂົ້າມາ ຫລືເຄີຍຂາດແນວນຸ່ງຫົ່ມຕອນໃດ ແລ້ວໄດ້ເອົາເສື້ອຜ້າໃຫ້ທ່ານນຸ່ງຕອນ
ໃດ
25:39 ຫລືຜູ້ຂ້າເຄີຍເຫັນທ່ານເຈັບປ່ວຍຕອນໃດ ຫລືເຄີຍຖືກຂັງຄຸກ ແລ້ວຜູ້ຂ້າໄດ້
ມາຫາທ່ານຕອນໃດ”

25:40 ແລ້ວເພິ່ນຜູ້ເປັນກະສັດນັ້ນຊິຕອບເຂົາວ່າ “ເຮົາຊິບອກຄວາມຈິງໃຫ້ພວກ
ເຈົ້າ ໂລດ ວ່າ ຊື່ງເຈົ້າໄດ້ເຮັດໄດ້ຊ່ອຍຄົນໃດຄົນໜຶ່ງໃນພວກພີ່ນ້ອງຂອງເຮົານີ້
ເຖິງແມ່ນຊິເປັນຜູ້ນ້ອຍໆທີ່ສຸດກໍຕາມ ກໍຄືໄດ້ເຮັດໃຫ້ເຮົາ”
25:41 ແລ້ວເພິ່ນຊິເວົ້າກັບພວກຜູ້ຢູ່ທາງຊ້າຍຂອງເພິ່ນວ່າ “ໃຫ້ຖອຍອອກຈາກເຮົາ
ໄປເດີ້ ພວກເຈົ້າຜູ້ຊິຕ້ອງຖືກສາບແຊ່ງເຂົ້າຢູ່ໃນບຶງໄຟທີ່ໄໝ້ຢູ່ຕະຫລອດການ
ເປັນນິດ ເປັນໜ້ອງທີ່ເຮົາໄດ້ກຽມໄວ້ສຳລັບຜີ ພະຍາມານ ຊາຕານກັບວິນຍານ
ຊົ່ວລູກນ້ອງຂອງມັນນັ້ນ
25:42 ເປັນຍ້ອນວ່າ ເຮົາເຄີຍຫິວ ແຕ່ເຈົ້າບໍ່ໄດ້ເອົາຫຍັງມາໃຫ້ເຮົາກິນ ເຮົາເຄີຍ
ກະຫາຍນ້ຳ ແຕ່ເຈົ້າບໍ່ໄດ້ເອົານ້ຳມາໃຫ້ເຮົາດື່ມ
25:43 ເຮົາເຄີຍເປັນຄົນແປກໜ້າ ແຕ່ເຈົ້າບໍ່ໄດ້ຕ້ອນຮັບເຮົາເຂົ້າມາ ເຮົາເຄີຍຂາດ
ແນວນຸ່ງຫົ່ມ ແຕ່ເຈົ້າບໍ່ໄດ້ເອົາເສື້ອຜ້າມາໃຫ້ເຮົານຸ່ງ ເຮົາເຄີຍເຈັບປ່ວຍ ກັບເຄີຍ
ຖືກຂັງຄຸກ ແຕ່ເຈົ້າບໍ່ໄດ້ມາຢ້ຽມມາຍາມເຮົາ”
25:44 ແລ້ວເຂົາຊິຖາມທ່ານວ່າ ທ່ານເຈົ້າຂ້າ ທີ່ຜູ້ຂ້າໄດ້ເຫັນທ່ານຫິວແນວກິນຫລື
ຫິວກະຫາຍນ້ຳ ຫລືເປັນຄົນແປກໜ້າ ຫລືຂາດເສື້ອຜ້າ ຫລືເຈັບປ່ວຍ ຫລືຖືກຂັງ-
ຄຸກ ແລ້ວຜູ້ຂ້າບໍ່ໄດ້ຊ່ອຍທ່ານຊັ້ນບໍ້’
25:45 ແລ້ວເພິ່ນຊິຕອບເຂົາວ່າ ‘ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ຊື່ງ
ເຈົ້າບໍ່ໄດ້ເຮັດໄດ້ຊ່ອຍແມ່ນແຕ່ຜູ້ນ້ອຍໆທີ່ສຸດໃນພວກນີ້ ກໍຄືເຈົ້າບໍ່ໄດ້ເຮັດໃຫ້
ເຮົາ’
25:46 ແລ້ວພວກນີ້ຊິຕ້ອງອອກໄປ ເຂົ້າສູ່ການຮັບໂທດຢູ່ຕະຫລອດການເປັນນິດ
ແຕ່ຜູ້ທ່ຽງທຳນັ້ນຊິເຂົ້າສູ່ຊີວິດອັນຕະຫລອດໄປເປັນນິດ”

## ມັດທາຍ ບົດທີ 26

26:1 ແລ້ວຢູ່ມາ ພໍ ພຣະເຢຊູ ໄດ້ເວົ້າຖ້ອຍຄຳນີ້ຈົບແລ້ວ ເພິ່ນຈັ່ງບອກພວກລູກສິດ
ຂອງເພິ່ນໄວ້ວ່າ
26:2 “ພວກເຈົ້າຮູ້ຢູ່ວ່າ ຢູ່ມາອີກສອງມື້ຊິເຖິງ ເທດສະການລ້ຽງສະຫລອງມື້ກູ້ຊາດ
ແລ້ວເປັນຍາມທີ່ເຮົາຜູ້ເປັນບຸດມະນຸດຊິຖືກທໍລະຍົດ ຮອດປະຫານຊີວິດເທິງໄມ້-
ກາງແຂນ”

26:3 ຫວ່າງນັ້ນພວກຫົວໜ້າປະໂລຫິດ ກັບນັກທຳພ້ອມພວກຜູ້ຫລັກຜູ້ໃຫຍ່ຂອງ
ປະຊາຊົນ ໄດ້ໄປຮ່ວມກັນຢູ່ວັງຂອງມະຫາປະໂລຫິດ ຊຶ່ງຄົນເອີ້ນກັນວ່າ ກາຢະ-
ຟາ
26:4 ແລ້ວຈັ່ງປຶກສາກັນເຖິງແຜນການທີ່ຊິຈັບ ພຣະເຢຊູ ດ້ວຍອຸບາຍ ແລ້ວເອົາ
ເພິ່ນໄປຂ້າ
26:5 ແຕ່ພວກເຂົາເວົ້າວ່າ “ຢ່າຫາກໍາຈັບໃນມື້ເທດສະການລ້ຽງເລີຍ ຢ້ານວ່າພວກ
ປະຊາຊົນຊິເກີດການຊຸນມຸນວຸ້ນວາຍ”
26:6 ບັດນີ້ ໃນຍາມທີ່ ພຣະເຢຊູ ຢູ່ໝູ່ບ້ານ ເບດທາເນຍ ໃນເຮືອນຂອງ ຊີໂມນ ຜູ້
ເປັນພະຍາດຂີ້ທູດນັ້ນ
26:7 ພໍດີມີຍິງຜູ້ໜຶ່ງຖືຕະຫລັບນໍ້າມັນຫອມລາຄາແພງໆ ໄດ້ມາຫາ ພຣະເຢຊູ
ແລ້ວຈັ່ງເອົານໍ້າມັນຫອມນັ້ນລິນໃສ່ຫົວຂອງເພິ່ນ
26:8 ແຕ່ວ່າ ພໍພວກລູກສິດຂອງເພິ່ນເຫັນແລ້ວກໍບໍ່ພໍໃຈ ຈັ່ງວ່າ “ໄດ້ປະໂຫຍດຫຍັງ
ທີ່ຊິເຮັດເສຍຖິ້ມແນວນີ້
26:9 ຄືນໍ້າມັນນີ້ ຄັນຂາຍກໍຊິໄດ້ເງິນຫລາຍ ແລ້ວຊິໄປແຈກຈ່າຍໃຫ້ຄົນຈົນກໍໄດ້”
26:10 ພໍ ພຣະເຢຊູ ຮັບຮູ້ໃນເລື່ອງນີ້ ຈັ່ງບອກເຂົາວ່າ “ກວນໃຈຍິງຍ້ອນຫຍັງ ນາງ
ໄດ້ເຮັດການດີໃຫ້ເຮົາຢູ່ແລ້ວ
26:11 ຄືຄົນຍາກຄົນຈົນນັ້ນ ເຂົາກໍຢູ່ນໍາເຈົ້າຢູ່ສະເໝີ ແຕ່ສ່ວນເຮົານີ້ ກໍຊິບໍ່ໄດ້ຢູ່ນໍາ
ເຈົ້າຢູ່ສະເໝີດອກ
26:12 ຊຶ່ງຍິງນີ້ໄດ້ລິນນໍ້າມັນຫອມໃສ່ໂຕເຮົາ ທີ່ນາງເຮັດກໍເປັນການເວົ້າເຖິງການ
ມ້ຽນສົບຂອງເຮົາ
26:13 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ ໂລດ ວ່າ ໝ້ອງໃດໆ ທົ່ວໂລກທີ່ຊິປະ-
ກາດຂ່າວດີອັນປະເສີດນີ້ ການທີ່ຍິງໄດ້ເຮັດນີ້ຊິເລື່ອງລືໄປເປັນອະນຸສອນບົ່ງ
ບອກເຖິງນາງນັ້ນນໍາ”
26:14 ຫວ່າງນັ້ນ ມີຄົນໜຶ່ງໃນພວກລູກສິດສິບສອງຄົນຊື່ ຢູດາ ອິດສະກາຣິອົດ
ໄດ້ໄປຫາພວກຫົວໜ້າປະໂລຫິດ

26:15 ຖາມວ່າ “ຄັນຂ້ອຍຊິມອບ ພຣະເຢຊູ ໄວ້ໃຫ້ພວກເຈົ້າ ພວກເຈົ້າຊິໃຫ້ອີຫຍັງ
ຂ້ອຍ” ຝ່າຍພວກເຂົາກໍຮັບປາກຕົກລົງກັບເຂົາວ່າຊິເອົາຫລຽນເງິນໃຫ້ ຢູດາ
ສາມສິບຫລຽນ
26:16 ຕັ້ງແຕ່ຍາມນັ້ນມາ ຢູດາ ກໍຄອຍຖ້າຫາໂອກາດທີ່ຊິທໍລະຍົດໃສ່ເພິ່ນ
26:17 ໃນມື້ທໍາອິດເທດສະການກິນເຂົ້າຈີ່ບໍ່ມີເຊື້ອຟູ ພວກລູກສິດມາຖາມ ພຣະເຢ-
ຊູ ວ່າ “ທ່ານຢາກຊິໃຫ້ພວກຜູ້ຂ້າຈັດກຽມສະຫລອງມື້ກູ້ຊາດໃຫ້ທ່ານກິນຢູ່ໜ້ອງ
ໃດ”
26:18 ເພິ່ນຈັ່ງສັ່ງເຂົາວ່າ “ໃຫ້ເຂົ້າໄປໃນເມືອງ ໄປຫາຜູ້ໜຶ່ງແລ້ວບອກເຂົາວ່າ ‘ອາ-
ຈານບອກວ່າ ຍາມເວລາຂອງເພິ່ນໃກ້ຊິມາຮອດແລ້ວ ເພິ່ນຄຶດຢາກສະຫລອງມື້
ກູ້ຊາດໃນເຮືອນຂອງເຈົ້າພ້ອມກັບພວກລູກສິດຂອງເພິ່ນນໍາ’”
26:19 ຝ່າຍພວກລູກສິດໄດ້ເຮັດຕາມທີ່ ພຣະເຢຊູ ສັ່ງ ແລ້ວໄດ້ຈັດກຽມເທດສະ-
ການລ້ຽງສະຫລອງມື້ກູ້ຊາດໄວ້ໃຫ້ພ້ອມຢູ່ຫັ້ນ
26:20 ບັດໃກ້ຊິຮອດຄໍ່າແລ້ວ ພຣະເຢຊູ ກໍນັ່ງລົງຮ່ວມກັນກັບລູກສິດສິບສອງຄົນ
26:21 ແລ້ວບັດພວມກິນຢູ່ຫັ້ນເພິ່ນຈັ່ງເວົ້າວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າ
ໂລດ ວ່າ ມີຄົນໜຶ່ງໃນພວກເຈົ້ານີ້ ຊຶ່ງຜູ້ນັ້ນຊິທໍລະຍົດເຮົາ”
26:22 ແລ້ວຝ່າຍພວກລູກສິດ ເຂົາກໍເປັນທຸກຫລາຍ ຕ່າງຄົນຕ່າງເລີ່ມຖາມເພິ່ນວ່າ
“ທ່ານເຈົ້າຂ້າ ແມ່ນຜູ້ຂ້າບໍ້”
26:23 ພຣະເຢຊູ ຕອບວ່າ “ຜູ້ທີ່ພວມຈີ້ມລົງໃນຊາມດຽວກັນກັບເຮົາ ຜູ້ນັ້ນເນາະຊິ
ທໍລະຍົດໃສ່ເຮົາ
26:24 ສ່ວນເຮົາຜູ້ເປັນບຸດມະນຸດ ດໍາເນີນໄປຕາມຊຶ່ງມີຂຽນໄວ້ເຖິງເຮົານັ້ນ ແຕ່ລະ-
ວັງພິນາດເດີ້ ຜູ້ທີ່ທໍລະຍົດເຮົາຜູ້ເປັນບຸດມະນຸດ ຄັນຜູ້ນັ້ນບໍ່ໄດ້ເກີດມາເລີຍ ກໍຊິ
ດີກວ່າສໍາລັບເຂົາ”
26:25 ບັດນີ້ ຢູດາ ຜູ້ທີ່ຊິທໍລະຍົດ ພຣະເຢຊູ ໄດ້ຖາມວ່າ “ອາຈານເຈົ້າຂ້າ ແມ່ນຜູ້-
ຂ້າບໍ້” ພຣະເຢຊູ ຕອບເຂົາວ່າ “ເຈົ້າເວົ້າເອງແລ້ວ”
26:26 ພວມຊິກິນຢູ່ຫັ້ນ ພຣະເຢຊູ ໄດ້ຫຍິບເຂົ້າຈີ່ມາ ຂອບຄຸນ ແລ້ວບິສົ່ງໃຫ້ລູກ-
ສິດ ແລ້ວຈັ່ງເວົ້າວ່າ “ໃຫ້ຮັບກິນເດີ້ ອັນນີ້ປຽບເປັນຄືກາຍຂອງເຮົາເດີ້”

26:27 ແລ້ວ ພຣະເຢຊູ ຈັ່ງຫຍິບເອົາຈອກມາ ຂອບຄຸນ ສົ່ງໃຫ້ເຂົາ ແລ້ວຈັ່ງເວົ້າວ່າ
“ໃຫ້ຮັບດື່ມໃຫ້ໝົດເດີ້
26:28 ນີ້ປຽບຄືເລືອດຂອງເຮົາ ຊຶ່ງເປັນຄໍາໝັ້ນສັນຍາໃໝ່ ຊຶ່ງຫລັ່ງໄຫລອອກເພື່ອ
ຍົກບາບໂທດໃຫ້ຜູ້ຄົນທັງຫລາຍ
26:29 ເຮົາບອກພວກເຈົ້າວ່າ ເຮົາຊິບໍ່ດື່ມນໍ້າຜົນເຄືອອະງຸ່ນຕໍ່ໄປອີກຈົນກວ່າມື້ນັ້ນຊິ
ມາເຖິງ ຄືມື້ທີ່ເຮົາຊິດື່ມກັນອີກຮ່ວມກັບພວກເຈົ້າໃນລາຊະອານາຈັກຂອງພຣະ-
ເຈົ້າຜູ້ເປັນພໍ່ຂອງເຮົາ”
26:30 ບັດພວກເຂົາຮ້ອງເພງສັນລະເສີນແລ້ວ ເຂົາກໍພາກັນອອກໄປຢູ່ພູເຂົາໝາກ-
ກອກເທດ
26:31 ແລ້ວ ພຣະເຢຊູ ເວົ້າກັບພວກລູກສິດວ່າ “ໃນຄືນມື້ນີ້ເອງ ພວກເຈົ້າໝົດຄູ່ຄົນ
ຊິສະດຸດໃຈຍ້ອນເຮົາ ຕາມມີຄໍາຂຽນໄວ້ວ່າ ‘ເຮົາຊິຟາດຊິຕີຜູ້ລ້ຽງແກະ ກັບແກະ
ຝູງນັ້ນຊິກະຈັກກະຈາຍໄປ’
26:32 ແຕ່ບັດເຮົາເປັນຂຶ້ນມາໃໝ່ແລ້ວ ເຮົາຊິອອກໄປທາງແຄວັ້ນ ກາລີເລ ກ່ອນ
ພວກເຈົ້າ”
26:33 ຝ່າຍ ເປໂຕ ຕອບເພິ່ນວ່າ “ແມ່ນແຕ່ໝົດຄູ່ຄົນຊິສະດຸດໃຈຍ້ອນທ່ານ ຜູ້ຂ້ານີ້
ຊິບໍ່ສະດຸດໃຈຈັກເທື່ອເລີຍ”
26:34 ພຣະເຢຊູ ເລີຍບອກ ເປໂຕ ວ່າ “ເຮົາຊິບອກຄວາມຈິງໃຫ້ເຈົ້າ ໂລດ ວ່າ ໃນ
ຄືນນີ້ເອງ ກ່ອນໄກ່ຂັນ ເຈົ້າຊິປະຕິເສດເຮົາຢູ່ສາມເທື່ອເລີຍ”
26:35 ເປໂຕ ເລີຍຕອບເພິ່ນວ່າ “ເຖິງແມ່ນຜູ້ຂ້າຊິຕ້ອງຕາຍກັບທ່ານ ຜູ້ຂ້າຊິບໍ່ປະ-
ຕິເສດທ່ານດອກ” ພວກລູກສິດເລີຍເວົ້າແນວດຽວກັນນັ້ນໝົດຄູ່ຄົນ
26:36 ແລ້ວ ພຣະເຢຊູ ໄດ້ພາລູກສິດໄປໜ້ອງໜຶ່ງທີ່ເອີ້ນກັນວ່າ ເຄັດເຊມາເນ
ແລ້ວເວົ້າກັບລູກສິດວ່າ “ບັດນີ້ໃຫ້ພວກເຈົ້ານັ່ງຢູ່ນີ້ກ່ອນເດີ້ ສ່ວນເຮົາກໍຊິອອກໄປ
ອະທິຖານເວົ້ານໍາພຣະເຈົ້າຢູ່ທາງພູ້ນ”
26:37 ແລ້ວເພິ່ນກໍພາ ເປໂຕ ກັບລູກຊາຍທັງສອງຂອງ ເຊເບດາຍ ໄປນໍາ ຮອດ
ໜ້ອງແລ້ວເພິ່ນກໍເລີ່ມໂສກເສົ້າໜັກໃຈຫລາຍຂະໜາດ

26:38 ແລ້ວເພິ່ນຈັ່ງເວົ້າກັບເຂົາວ່າ “ໃຈຂອງເຮົາເປັນທຸກແທບຊິຕາຍແລ້ວ ໃຫ້ຢູ່
ນຳເຮົາໝ້ອງນີ້ເຝົ້າເບິ່ງຈັກໜ່ອຍເດີ້”
26:39 ແລ້ວ ພຣະເຢຊູ ກໍຍ່າງອອກໄປອີກໜ່ອຍໜຶ່ງ ຂາບລົງໜ້າຈຳດິນ ແລ້ວອະ-
ທິຖານເວົ້ານຳພຣະເຈົ້າວ່າ “ໂອ້ ພຣະເຈົ້າຜູ້ເປັນພໍ່ຂອງຜູ້ຂ້າເອີຍ ຄັ່ນເປັນໄດ້ຂໍ
ໃຫ້ຈອກນີ້ພົ້ນຈາກຜູ້ຂ້າໄປເດີ້ ແຕ່ຈັ່ງໃດກໍຕາມ ຢ່າໃຫ້ເປັນໄປຕາມໃຈປາດຖະ-
ໜາຂອງຜູ້ຂ້າ ແຕ່ໃຫ້ເປັນໄປຕາມພຣະປະສົງຂອງພໍ່”
26:40 ອະທິຖານແລ້ວ ພຣະເຢຊູ ຈັ່ງມາຫາລູກສິດຂອງເພິ່ນນັ້ນ ເຫັນນອນຫລັບຢູ່
ເລີຍເວົ້າກັບ ເປໂຕ ວ່າ “ເປັນຫຍັງ ພວກເຈົ້າຈັ່ງຄອຍຖ້າເຝົ້າເບິ່ງຢູ່ກັບເຮົາຈັກຊົ່ວ
ໂມງດຽວບໍ່ໄດ້ບໍ້
26:41 ໃຫ້ພວກເຈົ້າເຝົ້າລະວັງກັບອະທິຖານເວົ້ານຳພຣະເຈົ້າເດີ້ ເພື່ອຊິບໍ່ເຂົ້າສູ່
ການທົດລອງ ຈິດໃຈພ້ອມແລ້ວກໍແມ່ນຢູ່ ແຕ່ເນື້ອໜັງຍັງອ່ອນກຳລັງ”
26:42 ເວົ້າແລ້ວ ເພິ່ນຈັ່ງອອກໄປອະທິຖານເວົ້ານຳພຣະເຈົ້າເປັນເທື່ອທີ່ສອງວ່າ
“ໂອ້ ຂ້າແຕ່ພຣະເຈົ້າຜູ້ເປັນພໍ່ຂອງຜູ້ຂ້າເອີຍ ຄັ່ນຜູ້ຂ້າຊິບໍ່ພົ້ນຈາກຈອກນີ້ໄດ້
ນອກຈາກຜູ້ຂ້າດື່ມກ່ອນ ຂໍໃຫ້ເປັນໄປຕາມພຣະປະສົງຂອງພໍ່ກໍແລ້ວກັນເດີ້”
26:43 ແລ້ວບັດເພິ່ນຫລົບມາ ກໍພໍ້ລູກສິດນັ້ນນອນຫລັບອີກ ຍ້ອນໜັງຕາເຂົາໜັກ
ມືນຕາບໍ່ຂຶ້ນ
26:44 ເພິ່ນເລີຍອອກຈາກພວກເຂົາ ໄປອະທິຖານເວົ້ານຳພຣະເຈົ້າເທື່ອທີ່ສາມ
ເປັນຄຳເກົ່າ
26:45 ອະທິຖານແລ້ວ ພຣະເຢຊູ ມາຫາພວກລູກສິດຂອງເພິ່ນ ເວົ້າວ່າ “ໃຫ້ນອນ
ຕໍ່ໄປໃຫ້ມັນຫາຍເໝື່ອຍຊະ ນີ້ແຫລະ ຊົ່ວໂມງນັ້ນໃກ້ຊິມາຮອດແລ້ວ ທີ່ວ່າເຮົາຜູ້
ເປັນບຸດມະນຸດຊິຕ້ອງຖືກທໍລະຍົດ ມອບໄວ້ໃນມືຂອງຄົນບາບ
26:46 ລຸກຂຶ້ນໄປກັນເຖີ ນີ້ແຫລະ ຜູ້ທີ່ຊິທໍລະຍົດເຮົາມາໃກ້ຊິຮອດແລ້ວ”
26:47 ແລ້ວບັດ ພຣະເຢຊູ ເວົ້າຍັງບໍ່ທັນຂາດຄຳ ນີ້ແຫລະ ຢູດາ ຊຶ່ງເປັນຄົນໜຶ່ງໃນ
ພວກລູກສິດສິບສອງຄົນນັ້ນ ໄດ້ເຂົ້າມາພ້ອມທັງຄົນຫລວງຫລາຍ ຖືດາບ ຖືໄມ້
ຕະບອງ ໄດ້ມາຈາກພວກຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ຂອງປະຊາ-
ຊົນ

26:48 ບັດນີ້ ຜູ້ນັ້ນທີ່ຊິທໍລະຍົດ ພຣະເຢຊູ ໄດ້ໃຫ້ສັນຍານກັບພວກນັ້ນວ່າ “ເຮົາຊິ
ຈູບແກ້ມຜູ້ໃດ ກໍເປັນຜູ້ນັ້ນເນາະ ໃຫ້ຈັບກຸມເຂົາໄວ້ໃຫ້ແໜ້ນໜາເດີ້”
26:49 ຍາມນັ້ນພໍດີ ຢູດາ ຍ່າງເຂົ້າມາຫາ ພຣະເຢຊູ ເວົ້າວ່າ “ສະບາຍດີ ອາຈານ”
ທັກທາຍແລ້ວຈັ່ງຈູບແກ້ມຂອງເພິ່ນ
26:50 ພຣະເຢຊູ ຈັ່ງຖາມເຂົາວ່າ “ໝູ່ພວກເອີຍ ມານີ້ຍ້ອນຫຍັງ” ພໍດີຄົນພວກນັ້ນກໍ
ເຂົ້າມາຢ່າງຊຸນມຸນ ຈັບ ພຣະເຢຊູ ຄຸມເພິ່ນໄປ
26:51 ແລ້ວນີ້ແຫລະ ມີຜູ້ໜຶ່ງທີ່ຢູ່ກັບ ພຣະເຢຊູ ຊັກເອົາດາບຂອງໂຕເອງອອກມາ
ແຂ້ວຜູ້ຮັບໃຊ້ຄົນໜຶ່ງຂອງມະຫາປະໂລຫິດຖືກຫູຂາດໄປ
26:52 ພຣະເຢຊູ ເລີຍບອກເຂົາວ່າ “ເອົາດາບຂອງເຈົ້າໃສ່ຝັກໄວ້ຊະ ຄືຜູ້ທີ່ໃຊ້ດາບ
ຊິຕ້ອງພິນາດຍ້ອນດາບ
26:53 ເຈົ້າບໍ່ໄດ້ຄຶດບໍ້ ວ່າເຮົາຊິສາມາດອະທິຖານ ຂໍນໍາພຣະເຈົ້າຜູ້ເປັນພໍ່ເຮົາຢູ່
ດຽວນີ້ ແລ້ວພໍ່ຊິສົ່ງກອງທັບເທວະທູດກວ່າສິບສອງກອງ ມາຊ່ອຍເຮົາ ໂລດ
26:54 ຈໍາເປັນແລ້ວມັນຊິຕ້ອງເປັນຈັ່ງຊີ້” ບໍ່ຊັ້ນ ພຣະຄໍາ ຊິເປັນໄປໃຫ້ສໍາເລັດໄດ້
ຈັ່ງໃດ
26:55 ແລ້ວໃນໂມງນັ້ນເອງ ພຣະເຢຊູ ເວົ້າກັບໝູ່ຄົນຢູ່ຫັ້ນວ່າ “ພວກເຈົ້າເຫັນເຮົາ
ເປັນໂຈນບໍ້ຈັ່ງຊິຖືດາບ ຖືຕະບອງອອກມາຈັບເຮົາ ແມ່ນເຮົານີ້ເຄີຍໄດ້ນັ່ງກັບ
ພວກເຈົ້າຢູ່ຄູ່ມື້ ຕອນເຮົາສອນໃນພຣະວິຫານ ແລ້ວເປັນຫຍັງພວກເຈົ້າມາຫາຈັບ
ເຮົາແນວນີ້
26:56 ແຕ່ເຫດການທັງໝົດທີ່ໄດ້ເກີດຂຶ້ນນີ້ ກໍໄດ້ເປັນໄປເພື່ອຊິສໍາເລັດຕາມຂໍ້
ພຣະຄໍາ ທີ່ພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າໄດ້ຂຽນໄວ້” ແລ້ວວາງຫັ້ນພໍ-
ດີລູກສິດທັງໝົດກໍໄດ້ປະຖິ້ມເພິ່ນໄວ້ ພາກັນໜີໄປ
26:57 ແລ້ວພວກນັ້ນທີ່ຈັບ ພຣະເຢຊູ ໄດ້ພາເພິ່ນໄປຫາ ນາຍ ກາຢະຟາ ມະຫາ-
ປະໂລຫິດນັ້ນ ເປັນໜ້ອງທີ່ນັກທໍາກັບພວກຜູ້ຫລັກຜູ້ໃຫຍ່ໄດ້ຕຸ້ມໂຮມກັນຢູ່
26:58 ແລ້ວສ່ວນ ເປໂຕ ກໍໄດ້ຕິດຕາມ ພຣະເຢຊູ ໄປຫ່າງໆ ຈົນຮອດວັງຂອງມະ-
ຫາປະໂລຫິດ ແລ້ວເຂົ້າໄປນັ່ງທາງໃນກັບພວກຄົນໃຊ້ ເພື່ອຊິເບິ່ງວ່າເລື່ອງນີ້ມັນ
ຊິຈົບລົງຈັ່ງໃດ

26:59 ບັດນີ້ ພວກຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ ພ້ອມທັງພວກສະມາ-
ຊິກສະພາ ໄດ້ຊອກຫາພະຍານບໍ່ຈິງມາເພື່ອຊິຟ້ອງຂໍ້ຫາ ຈັບຜິດ ພຣະເຢຊູ ຍ້ອນ
ວ່າຢາກຊິກໍ່ຄະດີພໍຊິປະຫານເພິ່ນໄດ້
26:60 ແຕ່ວ່າຫາຫຼັກຖານພະຍານບໍ່ໄດ້ ແມ່ນແຕ່ມີພະຍານບໍ່ຈິງຫລາຍໆ ຄົນມາໃຫ້
ການ ກໍຍັງຫາບໍ່ໄດ້ເລີຍ ແລ້ວໃນທີ່ສຸດ ມີພະຍານບໍ່ຈິງອີກສອງຄົນໄດ້ເຂົ້າມາ
26:61 ແລ້ວໄດ້ອ້າງວ່າ “ຄົນນີ້ເຄີຍຮັບປາກວ່າ ‘ເຮົາສາມາດຊິທຳລາຍພຣະວິຫານ
ຂອງພຣະເຈົ້າ ແລ້ວເຮົາຊິສ້າງຂຶ້ນໃໝ່ໃນສາມມື້’”
26:62 ບັດຟັງແລ້ວ ມະຫາປະໂລຫິດ ຈັ່ງໄດ້ລຸກຂຶ້ນຖາມ ພຣະເຢຊູ ວ່າ “ເຈົ້າຊິບໍ່
ໂຕ້ຕອບອີຫຍັງບໍ້ ເຈົ້າບໍ່ຮູ້ບໍ້ວ່າ ຄົນພວກນີ້ເປັນພະຍານຟ້ອງເຈົ້າເລື່ອງອີຫຍັງ”
26:63 ແຕ່ ພຣະເຢຊູ ກໍຍັງມິດຢູ່ ແລ້ວມະຫາປະໂລຫິດຈັ່ງບອກເພິ່ນວ່າ “ເຮົາສັ່ງໃຫ້
ເຈົ້າສາບານໂດຍອ້າງພຣະເຈົ້າຜູ້ເພິ່ນເປັນຢູ່ ໃຫ້ບອກເຮົາວ່າ ເຈົ້າເປັນ ພຣະ-
ຄຣິດ ພຣະບຸດ ຂອງພຣະເຈົ້ານັ້ນອີຫລີບໍ້”
26:64 ພຣະເຢຊູ ເວົ້າກັບເຂົາວ່າ “ເຈົ້າວ່າຖືກແລ້ວ ແລ້ວຫລາຍກວ່ານັ້ນອີກ ເຮົາ
ບອກພວກເຈົ້າວ່າ ໃນອະນາຄົດທາງໜ້ານັ້ນ ພວກເຈົ້າຊິໄດ້ເຫັນເຮົາຜູ້ເປັນບຸດ
ມະນຸດປະທັບຢູ່ທາງຂວາຂອງຜູ້ມີລິດທານຸພາບສູງສຸດ ແລ້ວຊິເຫັນເຮົາລົງມາໃນ
ເມກເທິງທ້ອງຟ້າ”
26:65 ບັດນັ້ນພໍດີ ມະຫາປະໂລຫິດຈັ່ງຈີກເສື້ອຂອງໂຕ ຈັ່ງເວົ້າວ່າ “ຄົນນີ້ເນາະໄດ້
ເວົ້າໝິ່ນປະມາດພຣະເຈົ້າພໍແຮງແລ້ວ ເຮົາຕ້ອງການຫຼັກຖານພະຍານອີຫຍັງອີກ
ນີ້ແຫລະ ບັດນີ້ ພວກເຈົ້າໄດ້ຍິນຄຳໝິ່ນປະມາດຂອງເຂົາຊັດເຈນຢູ່ແລ້ວ
26:66 ພວກເຈົ້າຄຶດເຫັນຈັ່ງໃດ” ແລ້ວໝົດຄູ່ຄົນເລີຍຕອບວ່າ “ເຂົາມີຄວາມຜິດເຖິງ
ຕາຍ”
26:67 ເວົ້າແລ້ວ ເຂົາຖົ່ມນ້ຳລາຍໃສ່ໜ້າເພິ່ນ ພ້ອມກັບທຸບຕີເພິ່ນ ແລ້ວຜູ້ລາງຄົນ
ເອົາຝ່າມືຟາດໃສ່ເພິ່ນ
26:68 ແລ້ວເວົ້າວ່າ “ເຈົ້າຜູ້ທີ່ຖືວ່າເປັນ ພຣະຄຣິດ ນີ້ ລອງທຳນາຍໃຫ້ເຮົາຟັງວ່າ
ແມ່ນໃຜຕົບເຈົ້າ”

26:69 ໃນຍາມນັ້ນ ເປໂຕ ນັ່ງຢູ່ທາງນອກບໍລິເວນວັງ ແລ້ວມີສາວໃຊ້ຄົນໜຶ່ງມາ
ເວົ້າກັບເຂົາວ່າ "ເຈົ້ານີ້ແລ້ວ ເຄີຍຢູ່ນຳ ເຢຊູ ຊາວ ກາລີເລ"
26:70 ແຕ່ ເປໂຕ ໄດ້ປະຕິເສດ ຕໍ່ໜ້າໝົດຄູ່ຄົນວ່າ "ທີ່ເຈົ້າວ່ານັ້ນ ຂ້ອຍບໍ່ຮູ້ເລື່ອງ
ດອກ"
26:71 ແລ້ວບັດພໍ ເປໂຕ ໄດ້ອອກໄປຢູ່ຊານຢູ່ທາງນອກ ມີສາວໃຊ້ອີກຄົນໜຶ່ງ
ຫລຽວເຫັນ ຈັ່ງມາເວົ້າໃຫ້ຄົນຢູ່ຫັ້ນຟັງວ່າ "ຄົນນີ້ເນາະ ເຄີຍຢູ່ນຳກັນກັບ ເຢຊູ
ຊາວ ນາຊາເຣັດ"
26:72 ເປໂຕ ຈັ່ງປະຕິເສດອີກ ເວົ້າຄຳສາບານວ່າ "ຂ້ອຍນີ້ ບໍ່ຮູ້ຈັກຄົນນັ້ນເລີຍ"
26:73 ແລ້ວຢູ່ມາອີກຈັກໜ່ອຍ ໝູ່ຄົນທີ່ຢືນຢູ່ແຖວນັ້ນ ກໍມາຢືນຢັນກັບ ເປໂຕ ວ່າ
"ແມ່ນເຈົ້ານີ້ລະ ເປັນຄົນໜຶ່ງໃນພວກນັ້ນຄັກແນ່ແລ້ວ ຄືສຳນຽງເວົ້າຂອງເຈົ້າໄດ້ສໍ່
ໂຕເຈົ້າ ໂລດ"
26:74 ແລ້ວຕອນນັ້ນ ເປໂຕ ກໍເລີ່ມຊິເວົ້າຄຳຫຍາບ ສະບົດສາບານວ່າ "ຂ້ອຍບໍ່ຮູ້-
ຈັກຄົນນັ້ນເດັດຂາດເລີຍ" ແລ້ວໃນຍາມນັ້ນພໍດີໄກ່ກໍຂັນ ໂລດ
26:75 ແລ້ວ ເປໂຕ ຈັ່ງຄຶດຊອດຄຳຂອງ ພຣະເຢຊູ ທີ່ໄດ້ເວົ້າກັບເຂົາວ່າ "ກ່ອນໄກ່
ຂັນ ເຈົ້າຊິປະຕິເສດເຮົາສາມເທື່ອ" ແລ້ວ ເປໂຕ ກໍອອກໄປທາງນອກ ຮ້ອງໄຫ້
ເສຍໃຈຢ່າງໃຫຍ່

## ມັດທາຍ ບົດທີ 27

27:1 ພໍແຈ້ງແລ້ວ ພວກຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ຂອງປະຊາຊົນ
ໄດ້ປຶກສາກັນເລື່ອງການຕໍ່ຕ້ານ ພຣະເຢຊູ ເພື່ອຫາຊ່ອງທາງທີ່ຊິປະຫານເພິ່ນ
27:2 ພໍພວກເຂົາມັດມືເພິ່ນແລ້ວ ກໍພາໄປມອບໄວ້ກັບເຈົ້າເມືອງ ຊື່ວ່າ ປົນຕຽວ
ປີລາດ
27:3 ຝ່າຍ ຢູດາ ຜູ້ທໍລະຍົດ ພຣະເຢຊູ ນັ້ນ ພໍໄດ້ເຫັນວ່າເພິ່ນຕ້ອງຖືກປັບໂທດ
ຢ່າງຮ້າຍແຮງ ກໍເລີຍກັບໃຈ ເອົາເງິນສາມສິບຫລຽນນັ້ນ ມາຄືນໃຫ້ພວກຫົວໜ້າ-
ປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ຂອງປະຊາຊົນ

27:4 ຈັ່ງບອກເຂົາວ່າ “ຂ້ອຍນີ້ບາບໜັກຫລາຍແລ້ວ ທີ່ຂ້ອຍໄດ້ທຳລະຍົດຄົນເລືອດ
ບໍລິສຸດ” ແລ້ວພວກນັ້ນຈັ່ງຕອບວ່າ “ການນັ້ນບໍ່ກ່ຽວກັບພວກເຮົາດອກ ເຈົ້າຕ້ອງ
ແບກເອົາເອງ”
27:5 ບັດນີ້ ຢູດາ ກໍເລີຍແກ່ງເງິນ *ສາມສິບ* ຫລຽນນັ້ນຖິ້ມລົງໃນພຣະວິຫານ ແລ້ວກໍ
ອອກໄປຜູກຄໍຕາຍ
27:6 ພວກຫົວໜ້າປະໂລຫິດຈັ່ງເກັບເອົາເງິນນັ້ນມາແລ້ວວ່າ “ເປັນການຜິດກົດ-
ບັນຍັດທີ່ຊິເກັບເງິນນັ້ນໄວ້ໃນຄັງພຣະວິຫານ ຍ້ອນເປັນຄ່າເລືອດ”
27:7 ເຂົາກໍປຶກສາກັນແລ້ວ ຈັ່ງເອົາເງິນນັ້ນໄປຊື້ທົ່ງຂອງຊ່າງປັ້ນໝໍ້ດິນໄວ້ ສຳລັບ
ເປັນປ່າຊ້າຝັງສົບຄົນຕ່າງບ້ານຕ່າງເມືອງ
27:8 ຍ້ອນເຫດນີ້ ທົ່ງນັ້ນຈັ່ງເອີ້ນກັນວ່າ ທົ່ງເລືອດ ຈົນຮອດຄູ່ມື້ນີ້
27:9 ຈັ່ງເປັນໄປຕາມທີ່ ພຣະຄຳ ໄດ້ກ່າວໄວ້ໂດຍ ເຢເຣມີຢາ ຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າ ວ່າ “ແລ້ວພວກເຂົາໄດ້ເອົາເງິນສາມສິບຫລຽນນັ້ນ ຊຶ່ງເປັນລາຄາ
ທີ່ຊາວ ອິສະຣາເອນ ຕີລາຄາໃຫ້ກັບເຂົາ
27:10 ແລ້ວໄປຊື້ທົ່ງຂອງຊ່າງປັ້ນໝໍ້ດິນ ຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ບອກຜູ້ຂ້າ
ໄວ້”
27:11 ແລ້ວສ່ວນ ພຣະເຢຊູ ບັດເພິ່ນຢືນຢູ່ຕໍ່ໜ້າເຈົ້າເມືອງ ເຈົ້າເມືອງຈັ່ງຖາມເພິ່ນ
ວ່າ “ເຈົ້າເປັນກະສັດຂອງພວກຢິວບໍ້” ພຣະເຢຊູ ຕອບ ລາວ ວ່າ “ທ່ານເວົ້າຖືກ
ແລ້ວ”
27:12 ຄືຕອນພວກຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ໄດ້ຟ້ອງກ່າວໂທດ
ເພິ່ນ ພຣະເຢຊູ ບໍ່ໄດ້ຕອບອີຫຍັງເລີຍ
27:13 ແລ້ວ ປີລາດ ຈັ່ງຖາມເພິ່ນວ່າ “ເຈົ້າບໍ່ໄດ້ຍິນບໍ້ ຂໍ້ຄະດີທີ່ເຂົາຟ້ອງໃສ່ເຈົ້ານີ້
ມັນກໍມີຫລາຍຂໍ້ແທ້”
27:14 ແຕ່ ພຣະເຢຊູ ກໍມິດຢູ່ ບໍ່ໄດ້ຕອບ ລາວ ຈັກຄຳ ເຈົ້າເມືອງກໍເລີຍງຶດຢ່າງໃຫຍ່
27:15 ບັດນີ້ ໃນເທດສະການລ້ຽງສະຫລອງມື້ກູ້ຊາດນັ້ນ ຕາມປະເພນີເຈົ້າເມືອງ
ເຄີຍປ່ອຍນັກໂທດຄົນໜຶ່ງຕາມໃຈຊອບຂອງໝູ່ປະຊາຊົນ
27:16 ຍາມນັ້ນ ມີນັກໂທດຫົວໂຈກຄົນໜຶ່ງຊື່ ບາຣາບາ

[27:17] ຈັ່ງຊັ້ນ ບັດໝູ່ປະຊາຊົນມາຕຸ້ມໂຮມກັນແລ້ວ ເຈົ້າເມືອງ ປີລາດ ໄດ້ຖາມຂຶ້ນ
ມາວ່າ "ພວກເຈົ້າຢາກຊິໃຫ້ເຮົາປ່ອຍຜູ້ໃດໃຫ້ເຈົ້າ ບາຣາບາ ຫລື ພຣະເຢຊູ ທີ່
ເອີ້ນກັນວ່າ ພຣະຄຣິດ "
[27:18] ຄື ປີລາດ ຮູ້ຢູ່ແລ້ວວ່າ ພວກຫົວໜ້າເຂົາໄດ້ມອບ ພຣະເຢຊູ ໄວ້ຍ້ອນອິດສາ
ເພິ່ນ
[27:19] ບັດຍາມ ປີລາດ ນັ່ງບັນລັງພິພາກສາຢູ່ຫັ້ນ ພໍດີເມຍ ລາວ ໄດ້ຝາກຄວາມມາ
ແຈ້ງ ລາວ ວ່າ "ຢ່າໄປຫຍຸ້ງກັບຄົນທ່ຽງທຳຜູ້ນີ້ເລີຍ ຍ້ອນວ່າມື້ນີ້ຂ້ອຍທຸກໃຈ
ຫລາຍອັນຫລາຍແນວໃນຄວາມຝັນຍ້ອນຜູ້ນັ້ນ"
[27:20] ຝ່າຍພວກຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ກໍຍຸຍົງໝູ່ຄົນທັງຫລາຍ
ຢູ່ຫັ້ນ ໃຫ້ຂໍປ່ອຍ ບາຣາບາ ແລ້ວໃຫ້ເຮັດຮ້າຍ ພຣະເຢຊູ
[27:21] ເຈົ້າເມືອງຈັ່ງຖາມເຂົາຊໍ້າອີກວ່າ "ໃນສອງຄົນນີ້ເຈົ້າຊິໃຫ້ເຮົາປ່ອຍຄົນໃດ"
ພວກເຂົາຕອບວ່າ " ບາຣາບາ ໆ"
[27:22] ປີລາດ ຈັ່ງຖາມພວກເຂົາວ່າ "ແລ້ວຊິໃຫ້ເຮົາເຮັດອີຫຍັງກັບ ພຣະເຢຊູ ທີ່
ເອີ້ນກັນວ່າ ພຣະຄຣິດ " ພວກເຂົາພາກັນຮ້ອງຕໍ່ ປີລາດ ວ່າ "ໃຫ້ເຂົາໃຫ້ຄຶງໄວ້ທີ່
ໄມ້ກາງແຂນ ໂລດ ເດີ້"
[27:23] ແລ້ວເຈົ້າເມືອງ ປີລາດ ຖາມວ່າ "ຄຶງຍ້ອນຫຍັງ ເຂົາໄດ້ເຮັດຊົ່ວອີຫຍັງ" ແຕ່
ພວກເຂົາແຮງຮ້ອງກັນວ່າ "ໃຫ້ຄຶງເຂົາທີ່ໄມ້ກາງແຂນເດີ້"
[27:24] ບັດ ປີລາດ ເຫັນວ່າບໍ່ໄດ້ການ ມີແຕ່ຊິເກີດຊຸນມຸນວຸ້ນວາຍຂຶ້ນ ປີລາດ ກໍເລີຍ
ເອົານໍ້າລ້າງມືຕໍ່ໜ້າໝູ່ຄົນຢູ່ຫັ້ນ ແລ້ວປະກາດວ່າ "ເຮົາບໍ່ມີຜິດໃນເລື່ອງເລືອດ
ຂອງຄົນທ່ຽງທຳຄົນນີ້ເລີຍ ໃຫ້ພວກເຈົ້າຮັບຜິດຊອບເອົາເອງ ໂລດ "
[27:25] ບັດນີ້ ໝູ່ຄົນຢູ່ຫັ້ນຮ້ອງພ້ອມກັນວ່າ "ໃຫ້ເລືອດຂອງເຂົາຕົກຢູ່ກັບເຮົາເອົາ
ໂລດ ພ້ອມທັງລູກຫລານຂອງເຮົານຳ"
[27:26] ແລ້ວ ປີລາດ ເລີຍປ່ອຍ ບາຣາບາ ໃຫ້ພວກເຂົາ ກັບພໍໄດ້ຄ້ຽນຕີ ພຣະເຢຊູ
ແລ້ວ ປີລາດ ເລີຍມອບເພິ່ນໄວ້ໃຫ້ຖືກຄຶງທີ່ໄມ້ກາງແຂນ

27:27 ແລ້ວທະຫານຂອງເຈົ້າເມືອງ ປີລາດ ໄດ້ນຳ ພຣະເຢຊູ ໄປໄວ້ໃນກອງບັນຊາ
ການທະຫານທີ່ເອີ້ນກັນວ່າ ປະໄຣໂຕຣຽມ ແລ້ວກໍຮ່ວມກັນທະຫານທັງກອງ
ລ້ອມເພິ່ນໄວ້
27:28 ແລ້ວພວກທະຫານນັ້ນກໍຖອດເສື້ອຄຸມຂອງເພິ່ນອອກ ເອົາເສື້ອຄຸມສີແດງ-
ເຂັ້ມມາສວມໃສ່ເພິ່ນ
27:29 ແລ້ວພວກເຂົາເອົາເຄືອໜາມມາສານເປັນມົງກຸດ ແລ້ວຈັ່ງສຸບໃສ່ຫົວຂອງ
ເພິ່ນໄວ້ ເຮັດແລ້ວກໍເອົາໄມ້ອໍ້ມາໃສ່ມືຂວາ *ໃຫ້ເປັນຄະທາ* ຂອງເພິ່ນ ແລ້ວເຂົາ
ໄດ້ຄຸກເຂົ່າລົງຕໍ່ໜ້າເພິ່ນ ຈັ່ງເຍາະເຍີ້ຍເພິ່ນວ່າ “ຂໍຊົງພຣະຈະເລີນ ກະສັດຂອງ
ພວກຢິວເຈົ້າຂ້າ”
27:30 ແລ້ວພວກເຂົາຖົ່ມນໍ້າລາຍໃສ່ເພິ່ນ ກັບເອົາໄມ້ອໍ້ນັ້ນຟາດໃສ່ຫົວເພິ່ນ
27:31 ແລ້ວບັດພວກເຂົາເຍາະເຍີ້ຍຖາກຖາງ ພຣະເຢຊູ ເຂົາກໍຖອດເສື້ອຄຸມສີ
ແດງນັ້ນອອກ ແລ້ວໄດ້ເອົາເສື້ອຄຸມຂອງເພິ່ນມາໃສ່ໃຫ້ ຈັ່ງນຳອອກໄປເພື່ອຊິຄຶງ
ປະຫານ
27:32 ແລ້ວບັດພວກເຂົາພວມນຳອອກມາ ເຂົາໄດ້ເຫັນຜູ້ຊາຍຊາວ ກີເຣເນ ຄົນໜຶ່ງ
ຊື່ ຊີໂມນ ເລີຍບັງຄັບເຂົາໃຫ້ແບກເອົາໄມ້ກາງແຂນຂອງ ພຣະເຢຊູ ໄປ
27:33 ບັດພວກເຂົາມາເຖິງໂນນພູໜ້ອງທີ່ເອີ້ນກັນວ່າ ໂຄລະໂຄທາ ຊຶ່ງແປວ່າ
ກະໂຫລກຫົວ
27:34 ພວກເຂົາຈັ່ງເອົານໍ້າສົ້ມອະງຸ່ນປະສົມກັບນໍ້າຂົມ ມາໃຫ້ ພຣະເຢຊູ ຮັບດື່ມ
ແຕ່ພໍເພິ່ນຊີມເບິ່ງແລ້ວກໍບໍ່ຍອມກິນ
27:35 ແລ້ວພວກເຂົາໄດ້ຄຶງປະຫານ ພຣະເຢຊູ ຢູ່ຫັ້ນ ແລ້ວກໍຈັບສະຫລາກແບ່ງປັນ
ເສື້ອຜ້າຂອງເພິ່ນ ຊຶ່ງເປັນໄປຕາມ ພຣະຄຳ ຂອງພຣະເຈົ້າໂດຍຜູ້ເປັນປາກເປັນ-
ສຽງທີ່ກ່າວວ່າ “ເສື້ອຜ້າຂອງຜູ້ຂ້າ ເຂົາແບ່ງປັນກັນ ສ່ວນແນວປົກຄຸມຂອງຜູ້ຂ້າ
ນັ້ນ ເຂົາກໍຈັບສະຫລາກກັນ”
27:36 ເຮັດແລ້ວພວກເຂົາກໍນັ່ງເຝົ້າເບິ່ງເພິ່ນຢູ່ຫັ້ນ
27:37 ແລ້ວມີທາຕິດໄມ້ກາງແຂນໄວ້ຢູ່ເຖິງຫົວຂອງ ພຣະເຢຊູ ເປັນຂໍ້ຫາທີ່ລົງໂທດ
ເພິ່ນວ່າ “ຜູ້ນີ້ຄື ເຢຊູ ກະສັດຂອງຊົນຊາດ ຢິວ ”

27:38 ໃນນັ້ນ ມີໂຈນຜູ້ຮ້າຍສອງຄົນ ຢູ່ຄົນລະຂ້າງ ຖືກຄຶງປະຫານໄວ້ພ້ອມນຳເພິ່ນ
ທາງຂວາຄົນໜຶ່ງ ທາງຊ້າຍອີກຄົນໜຶ່ງ
27:39 ແລ້ວຄູ່ຄົນທີ່ຜ່ານໄປມານັ້ນ ກໍສ່າຍຫົວ ດ່າດູຖູກ ພຣະເຢຊູ
27:40 ເວົ້າໃສ່ເພິ່ນວ່າ “ເຈົ້າຜູ້ທີ່ວ່າ ຊິທຳລາຍພຣະວິຫານ ແລ້ວຊິສ້າງຂຶ້ນໃໝ່ໃນ
ສາມມື້ນັ້ນ ຄັ່ນເຈົ້າເປັນ ພຣະບຸດ ຂອງພຣະເຈົ້າອີຫລີ ກໍໃຫ້ຊ່ອຍໂຕເອງໃຫ້ລອດ
ເນາະແມ່ ໃຫ້ລົງມາຈາກໄມ້ກາງແຂນເອົາ ໂລດ ເດີ້”
27:41 ຝ່າຍພວກຫົວໜ້າປະໂລຫິດ ກັບນັກທຳພ້ອມທັງພວກຜູ້ຫລັກຜູ້ໃຫຍ່ ກໍ
ເຍາະເຍີ້ຍໃສ່ເພິ່ນຄືກັນ
27:42 ເວົ້າວ່າ “ເຂົາຊ່ອຍຄົນອື່ນໃຫ້ລອດໄດ້ ແຕ່ຊ່ອຍໂຕເອງໃຫ້ລອດບໍ່ໄດ້ ຄັ່ນຄົນ
ຜູ້ນີ້ເປັນກະສັດຂອງຊາດ ອິສະຣາເອນ ອີຫລີ ກໍໃຫ້ເຂົາລົງມາຈາກໄມ້ກາງແຂນຢູ່
ທັນທີ ແລ້ວພວກເຮົາຊິເຊື່ອເຂົາ
27:43 ເຂົາວາງໃຈໃນພຣະເຈົ້າ ກໍໃຫ້ພຣະເຈົ້າຊ່ອຍເຂົາໃຫ້ລອດທັນທີເອົາ ໂລດ
ຄັ່ນວ່າພຣະເຈົ້າພໍໃຈໃນໂຕເຂົາອີຫລີ ຄືກັນກັບເຂົາຮັບປາກວ່າ ‘ເຮົານີ້ເປັນ
ພຣະບຸດ ຂອງພຣະເຈົ້າ’ ຕາມທີ່ເຂົາເວົ້ານັ້ນ”
27:44 ຝ່າຍໂຈນສອງຄົນນັ້ນທີ່ຖືກຄຶງປະຫານກັບເພິ່ນ ກໍຍັງເວົ້າຍັດໃສ່ໜ້າເພິ່ນ
ເປັນຄຳຫຍາບຊ້າຄືກັນ
27:45 ແລ້ວໃນຍາມນັ້ນພໍດີ ເກີດມີຄວາມມືດຄອບຄຸມຮອດທົ່ວແຜ່ນດິນ ຈາກທ່ຽງ
ໄປຮອດບ່າຍສາມ
27:46 ແລ້ວພໍປະມານບ່າຍສາມນັ້ນເອງ ພຣະເຢຊູ ໄດ້ຮ້ອງອອກສຽງດັ່ງ *ເປັນພາ-
ສາແອຣະເມອິກ* ວ່າ “ ເອລີ ເອລີ ລາມາສະບັກທານີ” ແປວ່າ “ພຣະເຈົ້າຂອງຜູ້-
ຂ້າໆ ເປັນຫຍັງພຣະອົງທ່ານຈັ່ງຫັນຫລັງໃສ່ຜູ້ຂ້າ”
27:47 ແລ້ວຜູ້ລາງຄົນທີ່ຢືນຢູ່ຫັ້ນ ບັດພໍໄດ້ຍິນກໍເວົ້າກັນວ່າ “ຄົນຜູ້ນີ້ເອີ້ນຫາຜູ້ທຳ-
ນາຍ ເອລີຢາ ”
27:48 ໃນຍາມນັ້ນພໍດີ ມີຄົນໜຶ່ງໃນພວກເຂົາໄດ້ແລ່ນອອກໄປເອົາຟອງນ້ຳຊຸບນ້ຳ
ສົ້ມອະງຸ່ນ ສຽບໃສ່ປາຍໄມ້ອໍ້ ຍື່ນຂຶ້ນໃຫ້ເພິ່ນກິນ

27:49 ແຕ່ຄົນອື່ນໆ ຢູ່ທີ່ນັ້ນບອກວ່າ “ຢ່າຫາກໍ່ເດີ້ ໃຫ້ເຮົາຄອຍຖ້າເບິ່ງ ວ່າ ເອລີຢາ ຊິ
ມາຊ່ວຍເຂົາໃຫ້ລອດຢູ່ບໍ້”
27:50 ສ່ວນ ພຣະເຢຊູ ພໍເພິ່ນໄດ້ຮ້ອງສຽງດັ່ງອອກມາອີກເທື່ອໜຶ່ງ ກໍໄດ້ປ່ອຍຈິດ-
ວິນຍານຂອງເພິ່ນໃຫ້ອອກໄປ
27:51 ແລ້ວນີ້ແຫລະ ມ່ານໃຫຍ່ *ທີ່ກັ້ນຫ້ອງສັກສິດໄວ້* ໃນພຣະວິຫານກໍຖືກຈີກຂາດ
ອອກເປັນສອງທ່ອນຈາກເທິງລົງໄປລຸ່ມ ແຜ່ນດິນກໍໄຫວ ສີລາໃຫຍ່ກໍແຕກຮ້າວ
ກັນ
27:52 ແລ້ວພວກອຸບໂມງຝັງສົບກໍຖືກເປີດອອກ ແລ້ວສົບຂອງຄົນຂອງພຣະເຈົ້າ
ຫລາຍຄົນທີ່ລ່ວງຫລັບໄປແລ້ວກໍໄດ້ເປັນຂຶ້ນມາ
27:53 ແລ້ວຈັ່ງອອກຈາກອຸບໂມງຫລັງຈາກ ພຣະເຢຊູ ເປັນຂຶ້ນມາຈາກຕາຍນັ້ນ
ແລ້ວຈັ່ງພາກັນເຂົ້າໄປໃນນະຄອນບໍລິສຸດ *(ຄືເມືອງ ເຢຣູຊາເລັມ)* ສະແດງໂຕຕໍ່
ຫລາຍຄົນຢູ່ທີ່ນັ້ນໃຫ້ເຫັນ
27:54 ບັດນີ້ ຝ່າຍນາຍຮ້ອຍກັບໝູ່ທະຫານຜູ້ທີ່ເຝົ້າເບິ່ງ ພຣະເຢຊູ ຢູ່ນໍາກັນນັ້ນ ບັດ
ພໍໄດ້ເຫັນແຜ່ນດິນໄຫວ ກັບເຫດການແນວຕ່າງໆ ທີ່ເປັນໄປທີ່ນັ້ນ ກໍພາກັນຢ້ານ
ໝົດແຮງ ເວົ້າກັນວ່າ “ແທ້ຈິງແລ້ວ ເພິ່ນຜູ້ນີ້ ແມ່ນ ພຣະບຸດ ຂອງພຣະເຈົ້າອີຫລີ”
27:55 ແລ້ວກໍມີຍິງຫລາຍຄົນທີ່ພາກັນເບິ່ງແຕ່ໄກໆ ພວກນີ້ເນາະ ໄດ້ຕິດຕາມຮັບ-
ໃຊ້ ພຣະເຢຊູ ມາຈາກແຄວ້ນ ກາລີເລ ມາ
27:56 ໃນຍິງພວກນັ້ນ ມີ ມາຣີອາ ຊາວ ມັກດາລາ ກັບມີ ມາຣີອາ ແມ່ຂອງ ຢາໂກ-
ໂບ ກັບ ໂຢເສ ແມ່ນເມຍ ເຊເບດາຍ ແມ່ຂອງລູກ ລາວ ນັ້ນ
27:57 ບັດພໍຄໍ່າລົງ ມີຄົນຮັ່ງມີຄົນໜຶ່ງທີ່ມາຈາກບ້ານ ອາຣີມາທາຍ ຊື່ວ່າ ໂຢເຊບ
ຜູ້ນີ້ກໍເປັນລູກສິດຂອງ ພຣະເຢຊູ ຄືກັນ
27:58 ເຂົາໄດ້ເຂົ້າໄປຫາ ປີລາດ ເພື່ອຂໍສົບ ພຣະເຢຊູ ປີລາດ ຈັ່ງສັ່ງໃຫ້ມອບສົບ
ເພິ່ນນັ້ນໃຫ້ໄວ້ກັບເຂົາ
27:59 ບັດ ໂຢເຊບ ໄດ້ຮັບສົບເພິ່ນມາແລ້ວ ເຂົາກໍເອົາຜ້າປ່ານທີ່ສະອາດພັນຫຸ້ມໄວ້

27:60 ແລ້ວໄດ້ເອົາສົບຂອງເພິ່ນ ວາງລົງໄວ້ໃນອຸບໂມງອັນໃໝ່ອູ່ງມຂອງ ລາວ ເອງ
ຊື່ງ ລາວ ໄດ້ສະກັດໄວ້ໃນໜ້າຜາຫີນ ວາງລົງແລ້ວລາວກໍຍູ້ຫີນມົນແຜ່ນໃຫຍ່ລົງ
ປິດປາກອຸບໂມງໄວ້ ເຮັດແລ້ວກໍຈາກໄປ
27:61 ແລ້ວຝ່າຍ ມາຣິອາ ຊາວ ມັກດາລາ ກັບ ມາຣິອາ ອີກຄົນໜຶ່ງນັ້ນ ກໍນັ່ງຢູ່
ທາງໜ້າອຸບໂມງ
27:62 ບັດນີ້ຕໍ່ມາຈາກມື້ຈັດກຽມ *(ຄືຈຸດເລີ່ມຕົ້ນຂອງມື້ພັກງານຂອງ ຊາວຢິວ )*
ພວກຫົວໜ້າປະໂລຫິດ ກັບພວກ ຟາຣີຊາຍ ໄດ້ພາກັນໄປຫາ ປີລາດ
27:63 ເວົ້າກັບ ປີລາດ ວ່າ “ທ່ານ ປີລາດ ເຈົ້າຂ້າ ພວກຜູ້ຂ້າຈຳໄດ້ວ່າ ຄົນລໍ້ລວງຜູ້-
ນັ້ນ ບັດເຂົາຍັງມີຊີວິດຢູ່ເຄີຍເວົ້າວ່າ ‘ລ່ວງໄປສາມມື້ແລ້ວເຂົາຊິເປັນຂຶ້ນມາໃໝ່’
27:64 ຈັ່ງຊັ້ນ ຂໍອອກຄຳສັ່ງ ໃຫ້ກອງທະຫານອອກໄປເຝົ້າອຸບໂມງໃຫ້ໝັ້ນຄົງ ຈົນ
ຮອດມື້ທີ່ສາມ ຢ້ານວ່າລູກສິດຂອງເຂົາ ອາດ ຊິມາໃນຍາມກາງຄືນ ມາລັກເອົາ
ສົບນັ້ນອອກໄປ ແລ້ວປະກາດກັບປະຊາຊົນວ່າ ເຂົາຜູ້ນັ້ນໄດ້ເປັນຂຶ້ນມາຈາກ
ຕາຍແລ້ວອີຫລີ ແລ້ວແຜນການຫລອກລວງນັ້ນ ກໍຊິຮ້າຍແຮງກວ່າເທື່ອກ່ອນ
ອີກ”
27:65 ປີລາດ ຈັ່ງບອກເຂົາວ່າ “ມີໃຫ້ຢູ່ແລ້ວ ໃຫ້ພວກເຈົ້າເອົາກອງທະຫານໄປ
ຮັກສາຄວາມປອດໄພໃຫ້ໝັ້ນຄົງທໍ່ທີ່ຊິເຮັດໄດ້”
27:66 ຈັ່ງຊັ້ນ ພວກເຂົາຈັ່ງອອກໄປພ້ອມກອງທະຫານ ເຮັດອຸບໂມງນັ້ນໃຫ້ໝັ້ນຄົງ
ປິດສະນິດໂດຍລົງຕາເຄື່ອງໝາຍທັບເຊືອກໄວ້ຢູ່ທີ່ຫີນ ແລ້ວຈັ່ງຈັດຍາມທະຫານ
ເບິ່ງແຍງເຝົ້າຢູ່ປະຈຳ

## ມັດທາຍ ບົດທີ 28

28:1 ຫລັງຈາກມື້ພັກງານຂອງ ຊາວຢິວ ຈົບລົງ ຢູ່ມາໃກ້ຊິຮອດແຈ້ງເປັນມື້ທຳອິດ
ຂອງອາທິດ ມາຣິອາ ຊາວ ມັກດາລາ ກັບ ມາຣິອາ ອີກຄົນໜຶ່ງ ພວມຊິຍ່າງມາ
ເບິ່ງອຸບໂມງ
28:2 ແລ້ວນີ້ແຫລະ ໄດ້ເກີດແຜ່ນດິນໄຫວຂະໜາດແຮງ ເປັນຍ້ອນເທວະທູດຂອງ
ອົງພຣະຜູ້ເປັນເຈົ້າໄດ້ລົງມາຈາກສະຫວັນ ມາກິ້ງກ້ອນຫີນນັ້ນອອກຈາກປາກ
ອຸບໂມງໄປ ເຮັດແລ້ວກໍນັ່ງຢູ່ເທິງກ້ອນຫີນນັ້ນ

28:3 ສີໜ້າຂອງເທວະທູດນັ້ນເຫລື້ອມຄືແສງຟ້າແມບເຮືອຮຸ່ງ ແລ້ວເສື້ອຂອງລາວ-
ກໍຂາວຄືຫິມະ
28:4 ບັດນີ້ ກອງທະຫານ *ໜ່ວຍກ້າຕາຍ* ຢູ່ເວນນັ້ນໄດ້ເກີດຢ້ານຢ່າງແຮງຍ້ອນທູດ
ອົງນັ້ນ ຈົນໂຕສັ່ນໜ້າຊີດຄືຄົນຕາຍ
28:5 ເທວະທູດຈັ່ງບອກຍິງສອງຄົນຢູ່ຫັ້ນວ່າ “ຢ່າສູ່ຢ້ານເລີຍ ຍ້ອນເຮົາຮູ້ວ່າພວກ
ເຈົ້າມາຫາ ພຣະເຢຊູ ຊຶ່ງຖືກຄຶງປະຫານນັ້ນ
28:6 ພຣະອົງທ່ານບໍ່ໄດ້ຢູ່ພີ້ເດີ້ ຄືວ່າພຣະອົງທ່ານໄດ້ເປັນຂຶ້ນມາຈາກຕາຍແລ້ວ
ຕາມທີ່ເພິ່ນເຄີຍບອກໄວ້ນັ້ນ ເຊີນມາເບິ່ງໜ້ອງທີ່ສົບຂອງອົງພຣະຜູ້ເປັນເຈົ້າເຄີຍ
ວາງນອນຢູ່
28:7 ແລ້ວໃຫ້ຟ້າວໄປບອກພວກລູກສິດຂອງພຣະອົງທ່ານເດີ້ ວ່າເພິ່ນເປັນຂຶ້ນມາ
ຈາກຕາຍແລ້ວໆ ນີ້ແຫລະ ເພິ່ນໄດ້ອອກໄປເຂົ້າແຄວ້ນ ກາລີເລ ກ່ອນພວກເຈົ້າ
ແລ້ວ ແລ້ວພວກເຈົ້າຊິໄດ້ຮັບໄດ້ເຫັນເພິ່ນຢູ່ຫັ້ນ ນີ້ແຫລະ ເຮົາໄດ້ບອກເຈົ້າ
ແລ້ວ”
28:8 ພໍໄດ້ຍິນແລ້ວ ຍິງສອງຄົນນັ້ນກໍອອກຈາກອຸບໂມງ ຟ້າວໄປໂດຍມີໃຈທັງຢ້ານ
ທັງຍິນດີຫລາຍ ແລ່ນນຳເອົາຂ່າວດີໄປບອກພວກລູກສິດຂອງເພິ່ນ
28:9 ແລ້ວໃນຕອນທີ່ຍິງສອງຄົນນັ້ນພວມໄປບອກລູກສິດຂອງເພິ່ນ ນີ້ແຫລະ
ພຣະເຢຊູ ໄດ້ຮັບເຂົາຢູ່ກາງທາງເວົ້າວ່າ “ໃຫ້ຊົມຊື່ນຍິນດີເດີ້” ແລ້ວຍິງສອງຄົນ
ນັ້ນກໍເລີຍກົ້ມກອດແຄ່ງຂາເພິ່ນ ກັບເຄົາລົບບູຊາເພິ່ນ
28:10 ແລ້ວ ພຣະເຢຊູ ຈັ່ງບອກເຂົາວ່າ “ຢ່າສູ່ຢ້ານເລີຍເດີ້ ໃຫ້ໄປບອກພວກພີ່ນ້ອງ
ຂອງເຮົາ ໃຫ້ເຂົາໄປແຄວ້ນ ກາລີເລ ແລ້ວເຂົາຊິໄດ້ຮັບໄດ້ເຫັນເຮົາຢູ່ຫັ້ນ”
28:11 ບັດພໍຍິງສອງຄົນນັ້ນພວມໄປຢູ່ ນີ້ແຫລະ ມີທະຫານຜູ້ລາງຄົນໃນພວກຍາມ
ໄດ້ເຂົ້າໄປໃນເມືອງ ເລົ່າເລື່ອງເຫດການຄູ່ແນວທີ່ເປັນໄປ *ຢູ່ທີ່ອຸບໂມງ* ນັ້ນ ໃຫ້
ພວກຫົວໜ້າປະໂລຫິດຟັງ
28:12 ແລ້ວບັດພວກຫົວໜ້າປະໂລຫິດ ມາຕຸ້ມໂຮມປຶກສາກັນກັບພວກຜູ້ຫລັກຜູ້-
ໃຫຍ່ແລ້ວ ກໍຕົກລົງເອົາເງິນຈຳນວນຫລາຍໃຫ້ພວກທະຫານ

28:13 ສັ່ງວ່າ “ໃຫ້ພວກເຈົ້າເວົ້າວ່າ ‘ພວກລູກສິດຂອງເຂົາມາລັກເອົາສົບໄປໃນ
ຍາມກາງຄືນ ຕອນພວກເຮົາພວມນອນຫລັບຢູ່’
28:14 ແລ້ວຄັນຄວາມນີ້ຊອດຫູເຈົ້າເມືອງ ປີລາດ ເຮົາຊິແກ້ໄຂນຳ ລາວ ໃຫ້ພວກ
ເຈົ້າປອດໄພຢູ່ດອກ”
28:15 ບັດນີ້ ພວກທະຫານຈັ່ງຮັບເອົາເງິນນັ້ນ ກັບໄດ້ເຮັດຕາມທີ່ເຂົາບອກມາ ແລ້ວ
ເລື່ອງນີ້ກໍໄດ້ເລື່ອງລືໄປໃນພວກຢິວຈົນຮອດຄູ່ມື້ນີ້
28:16 ແລ້ວລູກສິດສິບເອັດຄົນນັ້ນກໍໄດ້ໄປແຄວ້ນ ກາລີເລ ໄປພູເຂົາທີ່ ພຣະເຢຊູ
ໄດ້ບອກເຂົາໄວ້ນັ້ນ
28:17 ແລ້ວບັດພວກເຂົາເຫັນ ພຣະເຢຊູ ເຂົາຈັ່ງຂາບລົງເຄົາລົບບູຊາເພິ່ນ ແຕ່ຜູ້
ລາງຄົນຍັງສົງໄສຢູ່
28:18 ແລ້ວ ພຣະເຢຊູ ຈັ່ງເຂົ້າມາຫາ ເວົ້າກັບພວກເຂົາວ່າ “ລິດທານຸພາບທັງໝົດ
ໃນສະຫວັນກໍດີ ໃນແຜ່ນດິນໂລກກໍດີ ໄດ້ມອບໄວ້ກັບເຮົາທັງໝົດຢູ່ແລ້ວ
28:19 ຈັ່ງຊັ້ນ ໃຫ້ອອກໄປບອກສອນຄົນຄູ່ຊົນຊາດເດີ້ ແລ້ວຈັ່ງໃຫ້ເຂົາຮັບຈຸ່ມນ້ຳ
ໂດຍພຣະນາມຂອງພຣະເຈົ້າຜູ້ເປັນພໍ່ ກັບ ພຣະບຸດ ພ້ອມກັບ ພຣະວິນຍານ
28:20 ສອນເຂົາທັງຫລາຍໃຫ້ຖືຮັກສາໝົດຄູ່ອັນຄູ່ແນວທີ່ເຮົາໄດ້ບອກໄດ້ສັ່ງພວກ
ເຈົ້າໄວ້ ນີ້ແຫລະ ເຮົາຊິຢູ່ນຳພວກເຈົ້າສະເໝີໄປ ຈົນກວ່າຊິສິ້ນສຸດໂລກ ອາເມນ”

# ມາຣະໂກ

## ມາຣະໂກ ບົດທີ 1

1:1 ຈຸດເລີ່ມຕົ້ນເລື່ອງຂ່າວປະເສີດຂອງ ພຣະເຢຊູຄຣິດ ພຣະບຸດ ຂອງພຣະເຈົ້າ
ນັ້ນ ໄດ້ເປັນຈັ່ງຊີ້
1:2 ຄື ຕາມທີ່ມີຄຳຂຽນໄວ້ຂອງຜູ້ເປັນປາກເປັນສຽງຂອງພຣະເຈົ້າແນວນີ້ວ່າ “ນີ້-
ແຫລະ ເຮົາໃຊ້ທູດຂອງເຮົາໄປກ່ອນເຈົ້າ ແລ້ວຜູ້ນັ້ນຊິກຽມຫົນທາງໄວ້ໃຫ້ເຈົ້າ
1:3 ຊຶ່ງຄົນນັ້ນເປັນຜູ້ອອກສຽງຮ້ອງໃນຖິ່ນແຫ້ງແລ້ງວ່າ ‘ໃຫ້ກຽມຫົນທາງຂອງອົງ-
ພຣະຜູ້ເປັນເຈົ້ານັ້ນໄວ້ເດີ້ ເຮັດຫົນທາງຂອງເພິ່ນໃຫ້ມັນຊື່ເດີ້’”
1:4 ໂຢຮັນ ນັ້ນໄດ້ໃຫ້ຮັບພິທີຈຸ່ມນ້ຳໃນຖິ່ນແຫ້ງແລ້ງ ຄືໄດ້ປະກາດເລື່ອງການຮັບ
ຈຸ່ມນ້ຳສະແດງການກັບໃຈໃໝ່ ເພື່ອຄົນຊິຮັບການຍົກໂທດບາບ

1:5 ແລ້ວຄົນທົ່ວແຄວ້ນ ຢູດາຍ ຮ່ວມກັນທັງຊາວ ກຸງເຢຣູຊາເລັມ ໄດ້ພາກັນອອກ
ໄປຫາ ໂຢຮັນ ກັບໄດ້ຮັບພິທີຈຸ່ມນໍ້າຈາກ ລາວ ໃນແມ່ນໍ້າ ຢໍດາເນ ພ້ອມທັງສາ-
ລະພາບຄວາມຜິດບາບຂອງໂຕ
1:6 ຝ່າຍ ໂຢຮັນ ໄດ້ແຕ່ງໂຕດ້ວຍຜ້າຂົນອູດ ໃຊ້ໜັງສັດຄາດແອວ ກິນຕັກແຕນກັບ
ນໍ້າເຜິ້ງປ່າເປັນປະຈໍາ
1:7 ແລ້ວ ລາວ ປະກາດວ່າ “ຫລັງຈາກເຮົານີ້ ຊິມີເພິ່ນຜູ້ໜຶ່ງຊິມາ ແລ້ວເພິ່ນເປັນ
ໃຫຍ່ມີອໍານາດກວ່າເຮົາອີກຫລາຍ ຊຶ່ງເຮົາບໍ່ສົມຄວນແມ່ນຊິນ້ອມໂຕລົງແກ້
ສາຍເກີບໃຫ້ເພິ່ນເລີຍ
1:8 ທີ່ຈິງແລ້ວເຮົາໃຫ້ພວກເຈົ້າຮັບພິທີຈຸ່ມດ້ວຍນໍ້າ ແຕ່ເພິ່ນຜູ້ນັ້ນຊິໃຫ້ພວກເຈົ້າ
ຮັບການຈຸ່ມໂດຍ ພຣະວິນຍານ ”
1:9 ແລ້ວຢູ່ມາ ໃນຍາມນັ້ນ ພຣະເຢຊູ ໄດ້ອອກມາຈາກເມືອງ ນາຊາເຣັດ ຢູ່ແຄວ້ນ
ກາລີເລ ໄດ້ມາຮັບພິທີຈຸ່ມນໍ້າຈາກ ໂຢຮັນ ໃນແມ່ນໍ້າ ຢໍດາເນ
1:10 ພໍເພິ່ນຂຶ້ນມາຈາກນໍ້າແລ້ວ ພໍດີເພິ່ນຫລຽວເບິ່ງ ໄດ້ເຫັນທ້ອງຟ້າແຫວກອອກ
ແລ້ວ ພຣະວິນຍານ ເປັນລັກສະນະຄືນົກເຂົາ ໄດ້ລົງມາເທິງເພິ່ນ
1:11 ແລ້ວມີສຽງຂອງຜູ້ມີອໍານາດໄດ້ເວົ້າມາຈາກຟ້າສະຫວັນວ່າ “ເຈົ້າເປັນລູກທີ່
ຮັກຂອງເຮົາ ເຮົາພໍໃຈໃນເຈົ້າຫລາຍ”
1:12 ແລ້ວໃນຍາມນັ້ນພໍດີ ພຣະວິນຍານ ຈັ່ງນໍາເພິ່ນເຂົ້າໄປໃນຖິ່ນແຫ້ງແລ້ງ
1:13 ແລ້ວຜີ ພະຍາມານ ຊາຕານໄດ້ສວຍໂອກາດລອງໃຈ ພຣະເຢຊູ ຢູ່ໃນຖິ່ນ-
ແຫ້ງແລ້ງນັ້ນເປັນເວລາສີ່ສິບມື້ ເພິ່ນກໍຢູ່ຫັ້ນກັບພວກສັດປ່າ ແລ້ວມີໝູ່ເທວະທູດ
ມາຮັບໃຊ້ເພິ່ນຢູ່ຫັ້ນ
1:14 ຫລັງຈາກນັ້ນມາ ໂຢຮັນ ໄດ້ຖືກຈັບຂັງໄວ້ໃນຄຸກ ແລ້ວ ພຣະເຢຊູ ໄດ້ມາ
ແຄວ້ນ ກາລີເລ ມາປະກາດຂ່າວປະເສີດເລື່ອງລາຊະອານາຈັກຂອງພຣະເຈົ້າ
1:15 ຈັ່ງເວົ້າວ່າ “ຍາມທີ່ກໍານົດໄວ້ນັ້ນໄດ້ມາຮອດມາເຖິງແລ້ວ ຄືລາຊະອານາຈັກ-
ຂອງພຣະເຈົ້າໃກ້ຊິມາຮອດແລ້ວ ໃຫ້ພວກເຈົ້າກັບໃຈໃໝ່ເຊື່ອຂ່າວປະເສີດນັ້ນ
ເດີ້”

1:16 ບັດນີ້ ໃນລະຫວ່າງທີ່ ພຣະເຢຊູ ພວມຍ່າງໄປຕາມຊາຍທະເລ *ກາລີເລ* ນັ້ນ
ເພິ່ນຫລຽວເບິ່ງ ໄດ້ເຫັນ ຊີໂມນ ກັບ ອັນເດອາ ນ້ອງຊາຍຂອງ ລາວ ພວມລາກ
ອວນຢູ່ທະເລນັ້ນ ຍ້ອນວ່າເຂົາເປັນຄົນຫາປາ
1:17 ພຣະເຢຊູ ເວົ້າກັບເຂົາວ່າ “ໃຫ້ຕາມເຮົາມາເດີ້ ຄືພວກເຈົ້າເຄີຍຫາປາໃຫ້ເຈົ້າ
ຂອງ ແຕ່ນີ້ໄປເຮົາຊິໃຫ້ເຈົ້າຫາຄົນໃຫ້ພຣະເຈົ້າເດີ້”
1:18 ພຣະເຢຊູ ເວົ້າແລ້ວເຂົາຈັ່ງປະອວນຕາມເພິ່ນໄປ ໂລດ
1:19 ແລ້ວບັດເພິ່ນໄດ້ຍ່າງໄປອີກຈັກໜ່ອຍ ເພິ່ນກໍຫລຽວເບິ່ງ ໄດ້ເຫັນ ຢາໂກໂບ
ລູກຊາຍ ເຊເບດາຍ ກັບ ໂຢຮັນ ນ້ອງຊາຍຂອງ ຢາໂກໂບ ນັ້ນ ພວມສ້ອມແປງ-
ອວນຢູ່ໃນເຮືອຂອງເຂົາ
1:20 ແລ້ວໃນຍາມນັ້ນພໍດີເພິ່ນໄດ້ເອີ້ນເຂົາໃຫ້ຕາມມາຄືກັນ ເຂົາຈັ່ງປະ ເຊເບ-
ດາຍ ພໍ່ຂອງເຂົາໄວ້ທີ່ເຮືອກັບລູກຈ້າງ ແລ້ວໄດ້ຕາມ ພຣະເຢຊູ ໄປນຳ
1:21 ແລ້ວ ພຣະເຢຊູ ກັບພວກເຂົາຈັ່ງເຂົ້າເມືອງ ກາເປນາອູມ ແລ້ວພໍຮອດມື້ພັກ-
ງານຂອງ ຊາວຢິວ ເພິ່ນກໍໄດ້ເຂົ້າໄປສອນຄົນໃນສາລາທຳຢູ່ຫັ້ນ
1:22 ແລ້ວພໍຟັງ ພວກຄົນຢູ່ຫັ້ນກໍແປກປະຫລາດໃຈໃນຄຳສອນຂອງເພິ່ນ ຍ້ອນວ່າ
ເພິ່ນໄດ້ສອນເຂົາດ້ວຍສິດອຳນາດອີຫລີ ບໍ່ຄືພວກນັກທຳ* ນັ້ນ
1:23 ມີຜູ້ຊາຍຄົນໜຶ່ງໃນສາລາທຳຂອງເຂົາມີຜີໂສໂຄກເຂົ້າສິງ ມັນໄດ້ຮ້ອງອອກ
ມາ
1:24 ວ່າ “ ພຣະເຢຊູ ຊາວ ນາຊາເຣັດ ເອີຍ ກະລຸນາປ່ອຍພວກຜູ້ຂ້າໄວ້ຢູ່ພີ້ເຖີ
ພວກຜູ້ຂ້າບໍ່ມີອີຫຍັງກັບທ່ານດອກ ທ່ານມາເພື່ອຊິເຮັດຮ້າຍພວກຜູ້ຂ້າບໍ້ ຜູ້ຂ້າຮູ້-
ຈັກທ່ານຢູ່ດອກ ວ່າແມ່ນໃຜ ທ່ານຄືອົງບໍລິສຸດຂອງພຣະເຈົ້າ”
1:25 ພຣະເຢຊູ ຈັ່ງເວົ້າຫ້າມມັນວ່າ “ໃຫ້ມິດແມ່ະ ພວກມຶງອອກມາຈາກເຂົາທັນທີ”
1:26 ແລ້ວບັດຜີໂສໂຄກເຮັດໃຫ້ຄົນນັ້ນຊັກແຮງ ມັນຈັ່ງຮ້ອງສຽງດັ່ງແລ້ວກໍອອກ
ມາຈາກໂຕເຂົາ

* ນັກທຳເປັນອາຈານ ພຣະທຳ ພຣະເຈົ້າ

1:27 ແລ້ວບັດນີ້ ໝົດຄູ່ຄົນຢູ່ຫັ້ນກໍແປກໃຈເປັນຕາງຶດຫລາຍຈັ່ງຖາມກັນວ່າ “ໂອ້
ອັນນີ້ແມ່ນຫຍັງ ຄືແມ່ນຄຳສອນໃໝ່ໆ ອີຫຍັງ ຄືເພິ່ນຜູ້ນີ້ມີອຳນາດສໍ່າໃດຈັ່ງສາ-
ມາດສັ່ງຜີໂສໂຄກໄດ້ ແລ້ວມັນຄືເຊື່ອຟັງເພິ່ນ ໂລດ ”
1:28 ແລ້ວໃນຍາມນັ້ນ ຊື່ສຽງຂອງເພິ່ນໄດ້ເລື່ອງລືໄປລ້ອມຮອບທົ່ວຄູ່ບ້ານຄູ່ເມືອງ
ຢູ່ແຄວ້ນ ກາລີເລ
1:29 ພໍ ພຣະເຢຊູ ອອກມາຈາກສາລາທຳ ເພິ່ນກັບພວກຄົນຂອງເພິ່ນຈັ່ງເຂົ້າ
ເຮືອນຂອງ ຊີໂມນ ກັບ ອັນເດອາ ພ້ອມດ້ວຍ ຢາໂກໂບ ກັບ ໂຢຮັນ
1:30 ຫວ່າງນັ້ນ ແມ່ເຖົ້າຂອງ ຊີໂມນ ນອນປ່ວຍເປັນໄຂ້ຢູ່ ພໍເຂົ້າໄປແລ້ວພວກເຂົາ
ຈັ່ງບອກ ພຣະເຢຊູ ໃຫ້ຮູ້ຈັກເລື່ອງການປ່ວຍຂອງນາງ
1:31 ແລ້ວ ພຣະເຢຊູ ໄດ້ມາຈັບມືນາງ ກັບໄດ້ຊ່ອຍຊູຂຶ້ນ ແລ້ວໃນຫວ່າງນັ້ນເອງໄຂ້
ຂອງນາງກໍເຊົາກັບໝ້ອງ ແລ້ວນາງຈັ່ງຮັບໃຊ້ພວກເຂົາ
1:32 ຍາມຕອນແລງມື້ນັ້ນ ບັດຕະເວັນຕົກແລ້ວ ມີຄົນຫລວງຫລາຍໄດ້ພາຄົນເຈັບ-
ປ່ວຍໄຂ້ ກັບຄົນທີ່ຖືກວິນຍານຊົ່ວເຂົ້າສິງໄດ້ມາຫາເພິ່ນ
1:33 ແລ້ວຄົນທັງເມືອງກໍແຕກຕື່ນມາໂຮມກັນຢູ່ໜ້າປະຕູເຮືອນຫລັງນັ້ນ
1:34 ແລ້ວເພິ່ນຈັ່ງຮັກສາຄົນຫລວງຫລາຍທີ່ເປັນພະຍາດຕ່າງໆ ໃຫ້ເຊົາ ກັບໄດ້
ຂັບພວກຜີຕ່າງໆ ອອກນຳ ແລ້ວເພິ່ນໄດ້ສັ່ງຫ້າມຜີໝູ່ນັ້ນໄວ້ ບໍ່ໃຫ້ເວົ້າວ່າເພິ່ນ
ແມ່ນໃຜ ຍ້ອນມັນຮູ້ຈັກເພິ່ນຢູ່ແລ້ວ
1:35 ແລ້ວຕອນເຊົ້າມືດກ່ອນແຈ້ງ ພຣະເຢຊູ ໄດ້ລຸກອອກໄປຢູ່ບໍລິເວນເປົ່າປ່ຽວ
ແລ້ວອະທິຖານເວົ້ານຳພຣະເຈົ້າຢູ່ຫັ້ນ
1:36 ຝ່າຍ ຊີໂມນ ກັບໝູ່ພວກທີ່ຢູ່ນຳເຂົາໄດ້ຕາມຫາເພິ່ນ
1:37 ບັດພວກເຂົາພໍ້ເພິ່ນແລ້ວ ເຂົາຈັ່ງເວົ້າກັບເພິ່ນວ່າ “ໝົດຄູ່ຄົນຊອກຫາທ່ານຢູ່”
1:38 ແລ້ວ ພຣະເຢຊູ ໄດ້ບອກເຂົາວ່າ “ໃຫ້ພວກເຮົາເຂົ້າບ້ານເມືອງຖັດໄປ ເພື່ອ
ເຮົາຊິໄດ້ປະກາດຢູ່ຫັ້ນນຳ ຄືເຫດທີ່ເຮົາມາກໍເພື່ອເຮັດແນວນັ້ນ”
1:39 ແລ້ວເພິ່ນກໍປະກາດໃນສາລາທຳຂອງຄົນຢູ່ທົ່ວແຄວ້ນ ກາລີເລ ທັງຂັບໄລ່ຜີ
ອອກນຳ

1:40 ແລ້ວມີຄົນເປັນຂີ້ທູດຄົນໜຶ່ງໄດ້ມາຫາ ພຣະເຢຊູ ຈັ່ງຄຸກເຂົ່າລົງຕໍ່ເພິ່ນ ກັບ
ວອນຂໍກັບເພິ່ນວ່າ “ຄັ່ນພໍໃຈຊິກະລຸນາຜູ້ຂ້າ ທ່ານຊິສາມາດໃຫ້ຜູ້ຂ້າສະອາດເຊົາ
ເປັນມົນທິນຂີ້ທູດນີ້ໄດ້”
1:41 ແລ້ວ ພຣະເຢຊູ ອິຕົນເຂົາຫລາຍ ເພິ່ນຈັ່ງຢື່ນມືອອກແຕະຄົນນັ້ນ ເວົ້າກັບເຂົາ
ວ່າ “ເຮົາພໍໃຈຢູ່ແລ້ວ ໃຫ້ເຈົ້າສະອາດໝົດມົນທິນຊະເດີ້”
1:42 ແລ້ວພໍເພິ່ນເວົ້າແລ້ວ ໃນຍາມນັ້ນພໍດີພະຍາດຂີ້ທູດນັ້ນໄດ້ອອກຈາກເຂົາໄປ
ເຂົາເລີຍເຊົາເປັນມົນທິນສະອາດກັບໜ້ອງ ໂລດ
1:43 ແຕ່ວ່າກ່ອນທີ່ເຂົາອອກໄປ ພຣະເຢຊູ ໄດ້ສັ່ງເຂົາໄວ້
1:44 ໄດ້ສັ່ງເຂົາໄວ້ວ່າ “ນີ້ແຫລະ ເຈົ້າຢ່າສູ່ເວົ້າອີຫຍັງໃຫ້ຜູ້ອື່ນຟັງເດີ້ ແຕ່ໃຫ້ໄປຫາ
ປະໂລຫິດກ່ອນ ໃຫ້ ລາວ ເບິ່ງຊະ ກັບໃຫ້ຖວາຍເຄື່ອງບູຊາສະແດງໂຕວ່າເຈົ້າໄດ້
ເຊົາເປັນພະຍາດຂີ້ທູດແລ້ວ ເພື່ອເປັນພະຍານຫຼັກຖານຕໍ່ຄົນທັງຫລາຍ ຕາມ
ແນວຊຶ່ງ ໂມເຊ ໄດ້ສັ່ງໄວ້ນັ້ນ”
1:45 ແຕ່ວ່າຄົນນັ້ນບັດອອກໄປແລ້ວ ໄດ້ປ່າວປະກາດເລື່ອງນັ້ນຫລາຍຂະໜາດ
ໃຫ້ເລື່ອງລືອອກໄປທົ່ວ ຈົນ ພຣະເຢຊູ ຊິບໍ່ສາມາດເຂົ້າໄປເມືອງໃດໆ ຢ່າງເປີດ-
ເຜີຍຕໍ່ໄປອີກເລີຍ ແຕ່ເພິ່ນຕ້ອງອອກໄປຢູ່ທາງບໍລິເວນເປົ່າປ່ຽວ ແລ້ວກໍຍັງມີຄົນ
ຈາກຄູ່ບ້ານຄູ່ຕາແສງຫລັ່ງໄຫລອອກມາຕາມຫາເພິ່ນ

## ມາຣະໂກ ບົດທີ 2

2:1 ບັດຜ່ານໄປຫລາຍມື້ແລ້ວ ພຣະເຢຊູ ໄດ້ເຂົ້າເມືອງ ກາເປນາອູມ ອີກ ແລ້ວ
ຂ່າວໄດ້ເລື່ອງລືອອກໄປວ່າ ເພິ່ນຢູ່ໃນເຮືອນຢູ່ຫັ້ນ
2:2 ແລ້ວໃນຍາມນັ້ນພໍດີ ຄົນຫລວງຫລາຍໄດ້ເຂົ້າໂຮມກັນຢູ່ໃນຫັ້ນ ຈົນບໍ່ມີບ່ອນ
ເຫລືອທີ່ຊິຮັບຄົນອີກ ແມ່ນແຕ່ຊິເຂົ້າໃກ້ໜ້າປະຕູກໍບໍ່ໄດ້ຊ້ຳ ແລ້ວເພິ່ນໄດ້ປະກາດ
ສັ່ງສອນ ພຣະຄຳ ຂອງພຣະເຈົ້າໃຫ້ເຂົາ
2:3 ແລ້ວມີສີ່ຄົນໄດ້ຫາມຄົນອຳມະພາດຄົນໜຶ່ງນຳມາຫາ ພຣະເຢຊູ
2:4 ບັດພວກເຂົາຮອດແລ້ວ ກໍເຂົ້າໄປບໍ່ໄດ້ເລີຍຍ້ອນຄົນຫລາຍ ເຂົາຈັ່ງຮື້ດາດຟ້າ-
ຫຼັງຄາກົງທີ່ເພິ່ນຢູ່ຫັ້ນ ບັດຮື້ພໍເປັນປ່ອງແລ້ວ ເຂົາຈັ່ງຢ່ອນສາດນອນຂອງຄົນນັ້ນ
ລົງມາ

2:5 ບັດ ພຣະເຢຊູ ຫລຽວເບິ່ງ ໄດ້ສັງເກດຄວາມເຊື່ອຂອງພວກເຂົາ ເພິ່ນຈັ່ງເວົ້າ
ກັບຄົນອຳມະພາດນັ້ນວ່າ “ລູກເອີຍ ບາບຂອງເຈົ້າໄດ້ຮັບການອະໄພແລ້ວ”
2:6 ແຕ່ວ່າມີພວກນັກທຳຜູ້ລາງຄົນໄດ້ນັ່ງຢູ່ຫັ້ນ ພໍຟັງແລ້ວເຂົາຄຶດໃນໃຈວ່າ
2:7 “ເປັນຫຍັງຄົນຜູ້ນີ້ເວົ້າໝິ່ນປະມາດພຣະເຈົ້າຄືນັ້ນ ແມ່ນໃຜຊິສາມາດຍົກໂທດ
ໃຫ້ອະໄພບາບໄດ້ນອກຈາກພຣະເຈົ້າເທົ່ານັ້ນ”
2:8 ແລ້ວໃນຍາມນັ້ນພໍດີ ໃຈຂອງ ພຣະເຢຊູ ຮູ້ຈັກແນວຄວາມຄຶດຂອງເຂົາ ເພິ່ນ
ຈັ່ງຖາມເຂົາວ່າ “ເປັນຫຍັງພວກເຈົ້າຈັ່ງຄຶດແນວນັ້ນຢູ່ໃນໃຈ
2:9 ແບບໃດຊິງ່າຍກວ່າກັນ ທີ່ຊິວ່າກັບຄົນອຳມະພາດວ່າ ‘ບາບຂອງເຈົ້າໄດ້ຮັບ
ການອະໄພແລ້ວ’ ຫລືຊິວ່າ ‘ໃຫ້ລຸກຂຶ້ນຍົກສາດນອນຍ່າງໄປເຖີ’
2:10 ແຕ່ເພື່ອພວກເຈົ້າຊິໄດ້ຮູ້ວ່າ ເຮົາຜູ້ເປັນບຸດມະນຸດມີສິດທິອຳນາດໃນໂລກທີ່ຊິ
ກະລຸນາຍົກຄວາມຜິດບາບໄດ້” (ແລ້ວເພິ່ນຈັ່ງເວົ້າກັບຄົນອຳມະພາດວ່າ)
2:11 “ເຮົາບອກເຈົ້າວ່າ ໃຫ້ລຸກຂຶ້ນເດີ້ ແລ້ວມ້ຽນເອົາສາດນອນຂອງເຈົ້າເມືອບ້ານ
ຂອງເຈົ້າຊະ”
2:12 ແລ້ວຫວ່າງນັ້ນພໍດີ ຄົນອຳມະພາດໄດ້ລຸກຂຶ້ນແລ້ວກໍມ້ຽນເອົາສາດນອນຍ່າງ
ອອກໄປຕໍ່ໜ້າໝົດຄູ່ຄົນ ຄົນພວກນັ້ນກໍແປກໃຈເປັນຕາງຶດຫລາຍ ຈັ່ງຖວາຍສັນ-
ລະເສີນພຣະເຈົ້າວ່າ “ເຮົາບໍ່ເຄີຍເຫັນແບບນີ້ມາກ່ອນເລີຍ”
2:13 ຝ່າຍ ພຣະເຢຊູ ເພິ່ນໄດ້ອອກໄປຍ່າງຕາມຊາຍທະເລອີກ ແລ້ວຄົນຫລວງ-
ຫລາຍໄດ້ຕາມຫາເພິ່ນ ເພິ່ນກໍເລີຍສອນເຂົາຢູ່ຫັ້ນ
2:14 ບັດເພິ່ນພວມຍ່າງຜ່ານໄປດ່ານເກັບພາສີນັ້ນ ເພິ່ນຫລຽວເບິ່ງໄດ້ເຫັນ ເລວີ
ລູກຊາຍ ອາລະຟາຍ ນັ່ງຢູ່ທີ່ດ່ານນັ້ນ ຈັ່ງເວົ້າກັບເຂົາວ່າ “ໃຫ້ຕາມເຮົາມາເດີ້”
ເລວີ *(ຄື ມັດທາຍ)* ກໍໄດ້ລຸກຂຶ້ນຕາມ ພຣະເຢຊູ ໄປ ໂລດ
2:15 ແລ້ວຕໍ່ມາບັດ ພຣະເຢຊູ ໄດ້ນັ່ງກິນເຂົ້າປາອາຫານຢູ່ໃນເຮືອນຂອງ ເລວີ ນັ້ນ
ມີພວກຄົນເກັບພາສີກັບພວກຄົນບາບຫລາຍຄົນນັ່ງຮ່ວມພາເຂົ້າກັບ ພຣະເຢຊູ
ກັບພວກລູກສິດຂອງເພິ່ນຍ້ອນມີຄົນຫລວງຫລາຍທີ່ໄດ້ຕິດຕາມເພິ່ນໄປ

2:16 ແລ້ວບັດພໍພວກນັກທຳກັບພວກ ຟາຣີຊາຍ ເຫັນ ພຣະເຢຊູ ພວມກິນກັບ
ພວກຄົນເກັບພາສີກັບພວກຄົນບາບ ເຂົາຈັ່ງຖ້ວງລູກສິດຂອງເພິ່ນວ່າ “ເປັນຫຍັງ
ນາຍຂອງພວກເຈົ້າຈັ່ງນັ່ງກິນດື່ມຮ່ວມກັນກັບຄົນເກັບພາສີກັບຄົນບາບນັ້ນ”
2:17 ບັດ ພຣະເຢຊູ ໄດ້ຍິນຈັ່ງຊັ້ນ ເພິ່ນຈັ່ງເວົ້າກັບພວກເຂົາວ່າ “ຄົນຢູ່ດີບໍ່ຕ້ອງ-
ການໝໍ ແຕ່ຄົນເຈັບປ່ວຍຕ້ອງການໝໍ ຄືເຮົາບໍ່ໄດ້ມາເພື່ອຊິເອີ້ນຄົນຊອບທຳອັນ
ຖືກຕ້ອງ ແຕ່ໄດ້ມາເພື່ອຊິເອີ້ນຊິເຊີນຄົນບາບໃຫ້ກັບໃຈໃໝ່”
2:18 ແລ້ວຫວ່າງນັ້ນມີພວກລູກສິດຂອງ ໂຢຮັນ ກັບລູກສິດຂອງພວກ ຟາຣີຊາຍ
[ຊຶ່ງພວມຖືພິທີການອົດອາຫານຢູ່] ຈັ່ງມາສໍ່ຖາມ ພຣະເຢຊູ ວ່າ “ເປັນຫຍັງລູກສິດ
ຂອງ ໂຢຮັນ ກັບລູກສິດຂອງພວກ ຟາຣີຊາຍ ຈັ່ງຖືພິທີການອົດອາຫານ ແຕ່ລູກ-
ສິດຂອງເຈົ້າຄືບໍ່ໄດ້ຖື”
2:19 ແລ້ວ ພຣະເຢຊູ ຈັ່ງຕອບກັບເຂົາວ່າ “ໝູ່ພວກເຈົ້າບ່າວຄວນຊິຖືການອົດອາ-
ຫານຊັ້ນບໍ້ ບັດຍາມເຈົ້າບ່າວຍັງຢູ່ນຳເຂົາ ຄືບັດເຈົ້າບ່າວຍັງຢູ່ນຳເຂົາ ຊິບໍ່ມີການ
ຖືອົດອາຫານດອກ
2:20 ແຕ່ວ່າມັນຊິມີມື້ມາຮອດ ທີ່ເຈົ້າບ່າວຊິຖືກນຳໄປຈາກໝູ່ພວກເພິ່ນ ແລ້ວໃນມື້
ນັ້ນ ໝູ່ພວກເພິ່ນຊິຖືການອົດອາຫານອີຫລີ
2:21 ຄື ບໍ່ມີໃຜເຄີຍເອົາຜ້າທ່ອນໃໝ່ມາຕາບເສື້ອເກົ່າ ຄັ່ນເຮັດຈັ່ງຊັ້ນຜ້າທ່ອນໃໝ່
ນັ້ນບັດຫົດໂຕແລ້ວມັນຊິຈີກອອກຈາກຜ້າເກົ່ານັ້ນ ແລ້ວໃນທີ່ສຸດຮອຍຂາດຊິແຮງ
ຫລາຍກວ່າເກົ່າອີກ
2:22 ແລ້ວບໍ່ມີໃຜເຄີຍເອົາເຫລົ້າອະງຸ່ນໃໝ່ມາໃສ່ໄວ້ໃນຖົງໜັງເກົ່າ ຄັ່ນເຮັດຈັ່ງຊັ້ນ
ເຫລົ້າອະງຸ່ນໃໝ່ *ບັດດອງແລ້ວ* ຊິເຮັດໃຫ້ຖົງເກົ່າແຕກ ແລ້ວເຫລົ້າອະງຸ່ນໃໝ່ຊິ
ເຮ່ຍໄປ ກັບຖົງໜັງກໍຊິເສຍໄປນຳ ຄືຕາມຫລັກແລ້ວເຫລົ້າອະງຸ່ນໃໝ່ຕ້ອງໃສ່ໄວ້
ໃນຖົງໜັງໃໝ່”
2:23 ຕໍ່ມາ ພຣະເຢຊູ ກໍໄດ້ຍ່າງລັດທົ່ງນາເຂົ້າໄປ ເປັນມື້ພັກງານຂອງ ຊາວຢິວ ພໍດີ
ແລ້ວພວກລູກສິດຂອງເພິ່ນພວມຊິເດັດຮວງເຂົ້າກິນ
2:24 ຝ່າຍພວກ ຟາຣີຊາຍ ຈັ່ງຊັກຖາມ ພຣະເຢຊູ ວ່າ “ນີ້ແຫລະ ເປັນຫຍັງພວກ
ລູກສິດຂອງເຈົ້າຈັ່ງເຮັດແນວຜິດກົດບັນຍັດໃນມື້ພັກງານຂອງ ຊາວຢິວ ເຮົາ”

2:25 ເພິ່ນຈັ່ງຕອບເຂົາວ່າ “ພວກເຈົ້າຍັງບໍ່ເຄີຍອ່ານບໍ້ ຊຶ່ງ ດາວິດ ໄດ້ເຮັດຕອນ
ລາວ ຢູ່ໃນຍາມຫິວ ທັງຜູ້ກັບໝູ່ພວກທີ່ຢູ່ນຳ ລາວ
2:26 ຄືໃນສະໄໝທີ່ ອາບີອາທາ ເປັນມະຫາປະໂລຫິດນັ້ນ ດາວິດ ໄດ້ເຂົ້າໄປໃນ
ເຮືອນຂອງພຣະເຈົ້າ ແລ້ວໄດ້ກິນເຂົ້າຈີ່ອັນສັກສິດຢູ່ໃນຫັ້ນ ກັບໄດ້ໃຫ້ໝູ່ພວກທີ່
ຢູ່ນຳ ລາວ ກິນນຳ ຊຶ່ງກົດບັນຍັດຫ້າມໄວ້ບໍ່ໃຫ້ໃຜກິນ ມີແຕ່ພວກປະໂລຫິດທີ່ມີ
ສິດກິນໄດ້”
2:27 ແລ້ວ ພຣະເຢຊູ ບອກເຂົາວ່າ “ມື້ພັກງານຂອງ ຊາວຢິວ ນີ້ ໄດ້ມີໄວ້ເພື່ອຄົນ
ເຮົາ ບໍ່ແມ່ນຄົນເຮົາມີໄວ້ເພື່ອມື້ພັກງານ
2:28 ຈັ່ງຊັ້ນເຮົາຜູ້ເປັນບຸດມະນຸດ ໄດ້ເປັນເຈົ້າເປັນນາຍເໜືອມື້ພັກງານນັ້ນ”

## ມາຣະໂກ ບົດທີ 3

3:1 ເວົ້າແລ້ວ ພຣະເຢຊູ ໄດ້ເຂົ້າໄປໃນສາລາທຳອີກ ແລ້ວຢູ່ຫັ້ນມີຜູ້ຊາຍຄົນໜຶ່ງມີ
ລີບ
3:2 ບັດນີ້ ຄົນພວກນັ້ນຈ້ອງເບິ່ງ ພຣະເຢຊູ ວ່າ ເພິ່ນຊິຮັກສາຄົນມືລີບໃນມື້ພັກງານ
ນັ້ນຫລືບໍ່ ນີ້ກໍເພື່ອເຂົາຊິຫາແນວຟ້ອງຮ້ອງຈັບຜິດເພິ່ນໄດ້
3:3 ເພິ່ນເລີຍເວົ້າກັບຄົນມືລີບວ່າ “ໃຫ້ມາຢືນຢູ່ທາງໜ້າເດີ້”
3:4 ແລ້ວເພິ່ນຈັ່ງເວົ້າກັບຄົນພວກນັ້ນວ່າ “ໃນມື້ພັກງານນີ້ ຕາມກົດບັນຍັດນັ້ນ
ຄວນຊິເຮັດແນວດີຫລືເຮັດແນວຊົ່ວ ກອບກູ້ຊີວິດຫລືທຳລາຍຊີວິດ” ບັດນີ້ໝົດຄູ່
ຄົນກໍມິດຢູ່
3:5 ແລ້ວບັດເພິ່ນໄດ້ຫລຽວເບິ່ງຢູ່ລ້ອມຮອບແລ້ວ ເພິ່ນກໍມີຄວາມຄຽດຮ້າຍພ້ອມ
ເປັນທຸກ ຍ້ອນໃຈຂອງພວກເຂົາແຂງກະດ້າງໄປ ພຣະເຢຊູ ເລີຍສັ່ງຜູ້ຊາຍຄົນ
ນັ້ນວ່າ “ນີ້ ໃຫ້ຢຽດມືເຈົ້າອອກຊະເດີ້” ຜູ້ຊາຍຜູ້ນັ້ນກໍຢຽດມືອອກ ແລ້ວມືຂອງເຂົາ
ໄດ້ເຊົາກັບໝ້ອງ ດີຄືມືອີກຂ້າງໜຶ່ງ
3:6 ແລ້ວໃນຍາມນັ້ນພໍດີ ພວກ ຟາຣີຊາຍ ຈັ່ງອອກໄປປຶກສາກັບພັກພວກ ເຮໂຣດ
ເຖິງ ພຣະເຢຊູ ວ່າ ພວກເຂົາຊິເຮັດຈັ່ງໃດຈັ່ງຊິເຮັດຮ້າຍເພິ່ນໄດ້

3:7 ບັດນີ້ ຝ່າຍ ພຣະເຢຊູ ກໍຖອນໂຕຈາກໜ້ອງນັ້ນ ໄປຢູ່ທະເລກັບພວກລູກສິດ
ຂອງເພິ່ນ ແລ້ວມີຄົນຫລວງຫລາຍຂະໜາດຈາກແຄວ້ນ ກາລີເລ ກັບແຄວ້ນ ຢູ-
ດາຍ ໄດ້ຕາມເພິ່ນໄປ
3:8 ແລ້ວມີຄົນຫລວງຫລາຍຂະໜາດຈາກ ກຸງເຢຣູຊາເລັມ ເມືອງ ເອໂດມ ຟາກ
ແມ່ນ້ຳ ຢໍດາເນ ທາງພູ້ນ ຮ່ວມກັນທັງແຄວ້ນເມືອງ ຕີເຣ ກັບ ຊີໂດນ ພໍບັດເຂົາ
ໄດ້ຍິນເຖິງແນວໃຫຍ່ຍິ່ງທີ່ ພຣະເຢຊູ ໄດ້ເຮັດມານັ້ນ ພວກເຂົາຈັ່ງໄດ້ມາຫາເພິ່ນ
ນຳ
3:9 ແລ້ວເພິ່ນໄດ້ບອກພວກລູກສິດຂອງເພິ່ນວ່າ ໜ້າຊິມີເຮືອລຳນ້ອຍຄອຍຖ້າຮັບ
ເພິ່ນຢູ່ ຢ້ານຄົນຫລວງຫລາຍນັ້ນ ອາດ ມາບຽດສຽດເພິ່ນໄວ້
3:10 ຄືວ່າເພິ່ນໄດ້ຮັກສາຄົນມາຫລາຍແລ້ວ ຈົນວ່າພວກຄົນທີ່ເປັນພະຍາດຕ່າງໆ
ນັ້ນໄດ້ບຽດສຽດກັນເຂົ້າມາເພື່ອຊິໄດ້ເອົາມືໃສ່ເພິ່ນ
3:11 ແລ້ວ *ຄົນທີ່ມີ* ຜີໂສໂຄກ ບັດໄດ້ເຫັນ ພຣະເຢຊູ ກໍໄດ້ໝອບລົງຂາບເພິ່ນ ແລ້ວ
ຮ້ອງສຽງດັ່ງວ່າ “ທ່ານເປັນ ພຣະບຸດ ຂອງພຣະເຈົ້າ”
3:12 ແລ້ວຝ່າຍ ພຣະເຢຊູ ເພິ່ນຈັ່ງສັ່ງຫ້າມມັນໄວ້ ບໍ່ໃຫ້ເຜີຍວ່າເພິ່ນເປັນໃຜ
3:13 ແລ້ວ ພຣະເຢຊູ ໄດ້ຂຶ້ນພູເຂົາ ແລ້ວໄດ້ເອີ້ນຄົນມານຳເພິ່ນຕາມທີ່ເພິ່ນຕ້ອງ-
ການ ແລ້ວເຂົາຈັ່ງມາຫາເພິ່ນ ໂລດ
3:14 ແລ້ວໃນຄົນໝູ່ນັ້ນເພິ່ນໄດ້ເລືອກສິບສອງຄົນໄວ້ ຕັ້ງໃຫ້ເປັນທູດພິເສດຂອງ
ເພິ່ນ ຄືເພິ່ນຊິໃຊ້ຄົນພວກນີ້ໃຫ້ອອກໄປປະກາດ *ເລື່ອງຂອງເພິ່ນ*
3:15 ແລ້ວເພິ່ນຊິມອບໃຫ້ເຂົາມີອຳນາດທີ່ຊິຮັກສາພະຍາດຕ່າງໆ ກັບທີ່ຊິຂັບໄລ່ຜີ
ອອກໄດ້ນຳ
3:16 ແລ້ວຝ່າຍ ຊີໂມນ ນັ້ນ ເພິ່ນໄດ້ເອີ້ນຊື່ອີກວ່າ ເປໂຕ
3:17 ແລ້ວຝ່າຍ ຢາໂກໂບ (ລູກຊາຍ ເຊເບດາຍ ) ກັບ ໂຢຮັນ (ນ້ອງຊາຍຂອງ ຢາ-
ໂກໂບ ນັ້ນ) ທັງສອງຄົນນີ້ ພຣະເຢຊູ ໄດ້ເອີ້ນຊື່ເຂົາ *ຕາມນິໄສ* ວ່າ “ ໂບອາເນເຄ ”
ແປວ່າ ລູກຟ້າຮ້ອງ
3:18 ແລ້ວຝ່າຍ ອັນເດອາ ຟີລິບ ບາຣະໂທໂລມາຍ ມັດທາຍ ໂທມາ ຢາໂກ-
ໂບ (ລູກຊາຍ ອາລະຟາຍ ) ທັດເດອັດ ຊີໂມນ (ຊາວ ການາອານ )

3:19 ແລ້ວກໍ ຢູດາ (ຊາວ ອິດສະກາຣິອົດ ຜູ້ທີ່ໄດ້ທໍລະຍົດ ພຣະເຢຊູ ນັ້ນ) ພຣະ-
ເຢຊູ ກັບພວກສິບສອງຄົນນີ້ຈັ່ງເຂົ້າໄປໃນເຮືອນ
3:20 ແລ້ວມີຄົນຫລວງຫລາຍໄດ້ເຂົ້າມາຈັບກຸ່ມໂຮມກັນຢູ່ໃນຫັ້ນອີກ ອັດແໜ້ນຈົນ
ວ່າ ພຣະເຢຊູ ກັບໝູ່ພວກທີ່ໄປນຳເພິ່ນ ແມ່ນແຕ່ຊິກິນເຂົ້າກໍບໍ່ໄດ້
3:21 ແລ້ວບັດຍາດເພິ່ນໄດ້ຍິນເຖິງເລື່ອງນີ້ ພວກເຂົາກໍອອກໄປຕາມຫາເພື່ອຊິຈັບ
ເພິ່ນໄວ້ ຢ້ານເພິ່ນໄດ້ເສຍສະຕິເປັນບ້າໄປແລ້ວ
3:22 ແລ້ວພວກນັກທຳຊິ່ງໄດ້ລົງມາຈາກ ກຸງເຢຣູຊາເລັມ ໄດ້ເວົ້າວ່າ "ຜູ້ນີ້ໄດ້ຖືກ
ເບເອນເຊບູນ ສິງຢູ່" ກັບວ່າ "ທີ່ເຂົາຂັບໄລ່ຜີອອກໄດ້ກໍຍ້ອນໃຊ້ອຳນາດຂອງເຈົ້າ
ຜີໃຫຍ່ນັ້ນ"
3:23 ແລ້ວຝ່າຍ ພຣະເຢຊູ ຈັ່ງເອີ້ນຄົນພວກນັ້ນມາຟັງ ແລ້ວຈັ່ງເວົ້າກັບເຂົາເປັນ
ຄຳປຽບທຽບວ່າ "ຜີ ພະຍາມານ ຊາຕານຊິຂັບໄລ່ໂຕເອງໃຫ້ອອກໄດ້ຈັ່ງໃດ
3:24 ແລ້ວຄັ່ນລາຊະອານາຈັກໃດໆ ໄດ້ເກີດການແຕກແຍກກັນພາຍໃນ ລາຊະ-
ອານາຈັກນັ້ນຊິຢູ່ຢ່າງໝັ້ນຄົງກໍເປັນໄປບໍ່ໄດ້ *(ຕ້ອງເສື່ອມສະຫລາຍຈົນລົງຄັກໆ)*
3:25 ແລ້ວຄັ່ນເຮືອນໃດໆ ໄດ້ເກີດແຕກແຍກກັນພາຍໃນ ເຮືອນນັ້ນຊິຕັ້ງຢູ່ກໍບໍ່ໄດ້ຄື
ກັນ
3:26 ແລ້ວຄັ່ນຜີ ພະຍາມານ ຊາຕານຊິເກີດການຕໍ່ສູ້ກັນກັບໂຕເອງເຖິງແຕກແຍກ
ກັນພາຍໃນ ລາຊະອານາຈັກຂອງມັນນັ້ນຊິຕັ້ງຢູ່ກໍບໍ່ໄດ້ ມີແຕ່ຊິໝົດໄປ
3:27 ແລ້ວບໍ່ມີໃຜຊິສາມາດເຂົ້າໄປໃນເຮືອນຂອງຄົນຜູ້ທີ່ມີກຳລັງ ແລ້ວປຸ້ນຈີ້ເອົາ
ຊັບຂອງເຂົາໄດ້ເລີຍ ນອກຈາກຊິຈັບເອົາຄົນຜູ້ນັ້ນແລ້ວມັດໄວ້ຊະກ່ອນ ຈັ່ງຊິປຸ້ນ
ຈີ້ເອົາຊັບໃນເຮືອນຂອງເຂົາໄດ້
3:28 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ແນວຜິດບາບໝົດຄູ່ແນວຮ່ວມກັນທັງ
ຄຳໝິ່ນປະມາດທີ່ຜູ້ຄົນເຄີຍເວົ້າກັນຢູ່ ຊິໃຫ້ອະໄພກັນໄດ້
3:29 ແຕ່ວ່າ ສຳລັບຜູ້ທີ່ເວົ້າໝິ່ນປະມາດ ພຣະວິນຍານ ຜູ້ນັ້ນຊິບໍ່ໄດ້ຮັບການອະ-
ໄພໂທດຈັກເທື່ອເລີຍ ແຕ່ໄດ້ຕົກຢູ່ໃນຂັ້ນອັນຕະລາຍຮອດຈົບຫາຍວາຍວອດ
ຕະຫລອດເປັນນິດ"
3:30 ທີ່ ພຣະເຢຊູ ເວົ້າຈັ່ງຊັ້ນ ກໍຍ້ອນວ່າພວກເຂົາຫາວ່າເພິ່ນມີຜີໂສໂຄກເຂົ້າສິງ

3:31 ໃນຍາມນັ້ນ ແມ່ກັບພວກນ້ອງຊາຍຂອງ ພຣະເຢຊູ ມາຢືນຢູ່ທາງນອກ ແລ້ວ
ຈັ່ງໃຊ້ຄົນເຂົ້າໄປເອີ້ນເພິ່ນ
3:32 ແລ້ວຄົນຫລວງຫລາຍທີ່ນັ່ງຢູ່ອ້ອມເພິ່ນ ໄດ້ບອກເພິ່ນວ່າ “ນີ້ແຫລະ ແມ່ກັບ
ພວກນ້ອງຊາຍຂອງທ່ານໄດ້ມາຫາ ແລ້ວຄອຍຖ້າຢູ່ທາງນອກ”
3:33 ແລ້ວ ພຣະເຢຊູ ຕອບເຂົາວ່າ “ໃຜແໜ່ເປັນແມ່ຂອງເຮົາ ກັບເປັນພີ່ນ້ອງຂອງ
ເຮົາ”
3:34 ແລ້ວເພິ່ນຫລຽວເບິ່ງຄົນທີ່ນັ່ງອ້ອມເພິ່ນນັ້ນ ຈັ່ງເວົ້າວ່າ “ນີ້ແຫລະ ນີ້ກໍເປັນແມ່
ກັບພີ່ນ້ອງຂອງເຮົາ
3:35 ຄືຜູ້ໃດກໍຕາມທີ່ເຮັດຕາມພຣະປະສົງຂອງພຣະເຈົ້າ ຜູ້ນັ້ນເນາະໄດ້ເປັນພີ່-
ນ້ອງຊາຍຍິງກັບແມ່ຂອງເຮົາ ໂລດ ”

## ມາຣະໂກ ບົດທີ 4

4:1 ແລ້ວ ພຣະເຢຊູ ໄດ້ຕັ້ງຕົ້ນເລີ່ມສອນທີ່ຝັ່ງທະເລອີກ ຈັ່ງມີຄົນຫລວງຫລາຍ
ຂະໜາດພາກັນມາຫາເພິ່ນ ເພິ່ນເລີຍລົງໄປນັ່ງຢູ່ໃນເຮືອ ແລ້ວຄົນຫລວງຫລາຍ
ທັງໝົດນັ້ນກໍຢູ່ເທິງຝັ່ງ
4:2 ແລ້ວ ພຣະເຢຊູ ໄດ້ສອນເຂົາຫລາຍອັນຫລາຍແນວເປັນຄຳປຽບທຽບ ແລ້ວໃນ
ການສອນນັ້ນເພິ່ນເວົ້າກັບເຂົາວ່າ
4:3 “ໃຫ້ຟັງເອົາເດີ້ ນີ້ແຫລະ ມີຜູ້ຫວ່ານຜູ້ໜຶ່ງອອກໄປຫວ່ານເມັດພືດ
4:4 ແລ້ວມັນເປັນໄປທີ່ວ່າ ຕອນເຂົາພວມຫວ່ານຢູ່ຫັ້ນ ລາງເມັດກໍຕົກຕາມທາງ
ຍ່າງ ແລ້ວນົກກໍລົງມາກິນໝົດ
4:5 ແລ້ວລາງເມັດກໍຕົກໃສ່ພື້ນດິນທີ່ປົກພື້ນດິນຫີນ ມີດິນແຕ່ນ້ອຍ ຈັ່ງອອກງອກ
ຂຶ້ນໄວຍ້ອນດິນບາງໆ
4:6 ແຕ່ພໍບັດຕະເວັນຂຶ້ນມາ ແສງແດດຮ້ອນກໍແຜດເຜົາ ແລ້ວຈັ່ງຫ່ຽວແຫ້ງໄປ
ຍ້ອນວ່າຮາກບໍ່ຫລາຍ
4:7 ແລ້ວລາງເມັດກໍຕົກກາງໜາມ ແລ້ວໜາມກໍປົ່ງຂຶ້ນປົກຄຸມເມັດໄວ້ ຈັ່ງບໍ່ສາ-
ມາດເກີດຜົນໄດ້

4:8 ແລ້ວລາງເມັດກໍຕົກໃສ່ດິນດີ ງອກງາມຈະເລີນຂຶ້ນ ໄດ້ເກີດຜົນ ລາງເທື່ອກໍ
ສາມສິບເທົ່າ ຫົກສິບເທົ່າ ຮອດຮ້ອຍເທົ່າ”
4:9 ແລ້ວ ພຣະເຢຊູ ເວົ້າກັບເຂົາວ່າ “ໃຜມີຫູກໍໃຫ້ຟັງເອົາເດີ້”
4:10 ແລ້ວບັດເພິ່ນຢູ່ຜູ້ດຽວ ຄົນທີ່ຢູ່ອ້ອມເພິ່ນກັບລູກສິດສິບສອງຄົນນັ້ນ ໄດ້ຖາມ
ເພິ່ນເຖິງຄໍາປຽບທຽບນັ້ນ
4:11 ແລ້ວເພິ່ນຈັ່ງບອກເຂົາວ່າ “ຝ່າຍພວກເຈົ້າກໍໃຫ້ຮູ້ຈັກຢູ່ດອກ ຂໍ້ຄວາມເລິກລັບ
ເລື່ອງລາຊະອານາຈັກຂອງພຣະເຈົ້ານີ້ ແຕ່ຝ່າຍພວກຄົນຢູ່ທາງນອກນັ້ນ ຂໍ້-
ຄວາມແນວໝູ່ນີ້ຊິເວົ້າເປັນຄໍາອຸບປະມາເລິກລັບຊື່ໆ
4:12 ເພື່ອວ່າເຂົາຊິເບິ່ງແລ້ວເບິ່ງອີກແຕ່ຊິບໍ່ຮູ້ບໍ່ເຫັນ ກັບຟັງແລ້ວຟັງອີກແຕ່ຊິບໍ່
ເຂົ້າໃຈ ຢ້ານວ່າໃນຍາມທີ່ເຂົາ ອາດ ຊິກັບໃຈໃໝ່ ເຂົາກໍຊິໄດ້ຮັບການໃຫ້ອະໄພ
ຄວາມຜິດບາບຂອງເຂົາ”
4:13 ແລ້ວ ພຣະເຢຊູ ໄດ້ບອກເຂົາວ່າ “ຄໍາປຽບທຽບນັ້ນ ພວກເຈົ້າຍັງບໍ່ທັນເຂົ້າໃຈ
ບໍ້ ຄັ່ນຈັ່ງຊັ້ນພວກເຈົ້າຊິເຂົ້າໃຈຄໍາປຽບທຽບແນວອື່ນໆ ທັງມວນໄດ້ຈັ່ງໃດ
4:14 ຄືວ່າ ຜູ້ຫວ່ານນັ້ນກໍໄດ້ຫວ່ານ ພຣະຄໍາ ຂອງພຣະເຈົ້າ
4:15 ແລ້ວເມັດອັນທີ່ຫວ່ານຕົກໃສ່ດິນຕາມທາງຍ່າງນັ້ນ ກໍຄື ພຣະຄໍາ ຂອງພຣະ-
ເຈົ້າທີ່ຫວ່ານແລ້ວ ແຕ່ບັດເຂົາໄດ້ຟັງໄດ້ຍິນແລ້ວ ໃນຍາມນັ້ນພໍດີ ຜີ ພະຍາມານ
ຊາຕານກໍມາຊິງເອົາ ພຣະຄໍາ ຂອງພຣະເຈົ້າຊຶ່ງໄດ້ຫວ່ານໃນໃຈເຂົາແລ້ວ ໃຫ້
ອອກໄປໝົດ
4:16 ແລ້ວໃນທໍານອງດຽວກັນ ເມັດອັນທີ່ຕົກໃສ່ພື້ນດິນທີ່ປົກພື້ນດິນຫີນ ຄືໃຈຂອງ
ຄົນທີ່ໄດ້ຍິນ ພຣະຄໍາ ຂອງພຣະເຈົ້າແລ້ວ ແລ້ວກໍຮັບເອົາ ໂລດ ດ້ວຍຄວາມດີໃຈ
4:17 ແຕ່ວ່າບໍ່ມີຮາກໃນໂຕຈັ່ງທົນຢູ່ໄດ້ພຽງຍາມດຽວໜຶ່ງ ພໍເກີດການຍາກລໍາບາກ
ກັບການຂົ່ມເຫງຕ່າງໆ ໄດ້ເຂົ້າມາສູ່ຊີວິດຍ້ອນ ພຣະຄໍາ ຂອງພຣະເຈົ້ານັ້ນ ເຂົາກໍ
ເກີດຂຸ່ນເຄືອງໃຈກໍເລີຍເຊົາ
4:18 ແລ້ວເມັດອັນທີ່ຫວ່ານຕົກໃສ່ດິນກາງໜາມນັ້ນ ຄືຄົນທີ່ໄດ້ຟັງ ພຣະຄໍາ ຂອງ
ພຣະເຈົ້າແລ້ວ

4:19 ແລ້ວຄວາມກັງວົນຕາມທຳມະດາໂລກ ກັບຄວາມລຸ່ມຫລົງໃນຊັບສົມບັດ ກັບ
ຄວາມໂລບແນວຕ່າງໆ ໄດ້ເຂົ້າມາປົກຄຸມ ພຣະຄຳ ຂອງພຣະເຈົ້ານັ້ນໄວ້ ເລີຍ
ເຊົາເກີດຜົນ
4:20 ແຕ່ສ່ວນເມັດອັນທີ່ຫວ່ານຕົກໃສ່ດິນດີນັ້ນ ຄືຄົນທີ່ໄດ້ຍິນ ພຣະຄຳ ຂອງພຣະ-
ເຈົ້າ ກັບໄດ້ຮັບໄວ້ຢ່າງດີ ຈັ່ງເກີດຜົນ ລາງເທື່ອກໍສາມສິບເທົ່າ ຫົກສິບເທົ່າ ຮອດ
ຮ້ອຍເທົ່າ”
4:21 ແລ້ວເພິ່ນຖາມພວກເຂົາວ່າ “ຜູ້ທີ່ເອົາຕະກຽງມາຕັ້ງໄວ້ຢູ່ ເຂົາກໍຊິຕັ້ງໄວ້ໃຕ້ຄຸ
ຖັງ ຫລືໃຕ້ຕຽງນອນບໍ້ ບໍ່ແມ່ນຊິຕັ້ງໄວ້ເທິງແທ່ນຕະກຽງຊັ້ນບໍ້
4:22 ຄືວ່າ ຊິບໍ່ມີອີຫຍັງທີ່ຖືກເຊື່ອງໄວ້ ຊຶ່ງຊິບໍ່ໄດ້ຖືກເຜີຍອອກມາໃຫ້ຮູ້ໃຫ້ເຫັນ ກັບ
ບໍ່ມີອີຫຍັງທີ່ປິດບັງໄວ້ ຊຶ່ງຊິບໍ່ໄດ້ອອກມາໃນທີ່ແຈ້ງ
4:23 ໃຜມີຫູກໍໃຫ້ຟັງເອົາເດີ້”
4:24 ແລ້ວເພິ່ນເວົ້າກັບເຂົາຕໍ່ວ່າ “ໃຫ້ຈົດຈໍ່ຕໍ່ແນວທີ່ເຈົ້າຟັງນີ້ໃຫ້ດີເດີ້ ຄືຄັ່ນເຈົ້າຊິ
ຕວງອີຫຍັງໃຫ້ເຂົາ *(ຊິຫລາຍຫລືຊິນ້ອຍຊໍາໃດ)* ເຈົ້າກໍຊິໄດ້ຮັບການຕວງມາໃນ
ທຳນອງດຽວກັນນັ້ນ ແລ້ວຕໍ່ຜູ້ທີ່ເອົາໃຈໃສ່ຟັງເອົານັ້ນ ກໍຊິໄດ້ຮັບການເພີ່ມເຕີມ
ໃຫ້ອີກ
4:25 ຄືຜູ້ໃດທີ່ມີຢູ່ແລ້ວກໍຊິເພີ່ມເຕີມໃຫ້ຜູ້ນັ້ນອີກ ແຕ່ຝ່າຍຜູ້ທີ່ບໍ່ມີ ແມ່ນແຕ່ແນວທີ່
ເຂົາມີຢູ່ຫັ້ນກໍຊິເອົາຈາກເຂົາໄປເລີຍ”
4:26 ແລ້ວເພິ່ນເວົ້າຕໍ່ອີກວ່າ “ລາຊະອານາຈັກຂອງພຣະເຈົ້າປຽບຄືຜູ້ຊາຍຄົນໜຶ່ງ
ທີ່ຫວ່ານເມັດພືດລົງໃນດິນ
4:27 ແລ້ວກາງຄືນມາກໍເຂົ້ານອນ ພໍມື້ເຊົ້າມາກໍລຸກຂຶ້ນ ຢູ່ຈັ່ງຊັ້ນ ຝ່າຍເມັດພືດນັ້ນ
ໄດ້ອອກງອກຈະເລີນຂຶ້ນຢູ່ຈັ່ງໃດ ເຂົາກໍບໍ່ຮູ້ຈັກວ່າມັນເປັນໄປໄດ້ແນວໃດ
4:28 ຄືວ່າດິນນັ້ນກໍໃຫ້ເມັດອອກງອກເກີດຜົນຂອງມັນ ເປັນລັກສະນະໃບຫຍ້າ
ກ່ອນ ແລ້ວກໍເປັນລຳຕົ້ນທີ່ອອກຮວງ ຢູ່ມາຮວງນັ້ນກໍມີເມັດເຂົ້າເຕັມຮວງ
4:29 ບັດໝາກແກ່ພໍດີແລ້ວ ເຂົາອອກໄປເກັບກ່ຽວ ໂລດ ຍ້ອນວ່າມັນເຖິງຍາມມັນ
ແລ້ວ”

4:30 ແລ້ວເພິ່ນເວົ້າວ່າ “ລາຊະອານາຈັກຂອງພຣະເຈົ້ານີ້ ຊິປຽບຄືອີຫຍັງ ຫລືຊິ
ເວົ້າເຖິງແນວໃດ
4:31 ມັນກໍປຽບຄືເມັດຜັກກາດເມັດດຽວ ຍາມປູກລົງໃນດິນນັ້ນກໍເປັນເມັດນ້ອຍ
ກວ່າເມັດອື່ນໆ ໃນແຜ່ນດິນໂລກ
4:32 ແຕ່ບັດປູກແລ້ວມັນຈັ່ງງອກຂຶ້ນໃຫຍ່ກວ່າຜັກແນວອື່ນໆ ທັງໝົດ ແລ້ວບັດ
ແຕກກິ່ງກ້ານອອກມາມັນກໍໃຫຍ່ພໍທີ່ຊິໃຫ້ນົກໃນອາກາດມາອາໄສຢູ່ໃນຮົ່ມຂອງ
ມັນນັ້ນໄດ້”
4:33 ແລ້ວເພິ່ນໄດ້ສອນ ພຣະຄຳ ຂອງພຣະເຈົ້າໃຫ້ເຂົາເປັນຄຳປຽບທຽບເປັນ
ຫລາຍອັນຫລາຍແນວ ຕາມທີ່ເຂົາສາມາດຮັບຟັງໄດ້
4:34 ແລ້ວ ພຣະເຢຊູ ບໍ່ໄດ້ສອນອີຫຍັງໃຫ້ເຂົານອກຈາກເປັນຄຳປຽບທຽບ ແລ້ວ
ບັດພວກເຂົາພວມພັກເຊົາເມື່ອຍ ເພິ່ນຈັ່ງອະທິບາຍໝົດຄູ່ແນວນັ້ນໃຫ້ພວກສິດ
ຂອງເພິ່ນຟັງ
4:35 ແລ້ວໃນມື້ດຽວກັນນັ້ນພໍຮອດຫົວຄ່ຳ ເພິ່ນກໍເວົ້າກັບພວກສິດຂອງເພິ່ນວ່າ
“ໃຫ້ພວກເຮົາຂ້າມໄປຟາກຝັ່ງພູ້ນຊະ”
4:36 ບັດນີ້ ບັດພວກລູກສິດໄດ້ລາຄົນຫລວງຫລາຍໄປແລ້ວ ເຂົາກໍຂຶ້ນເຮືອກັບ
ພຣະເຢຊູ ຊຶ່ງຢູ່ໃນເຮືອແລ້ວ ອອກຈາກຝັ່ງໄປ ແລ້ວກໍມີເຮືອນ້ອຍອີກຫລາຍລຳທີ່
ໄປນຳເຂົາ
4:37 ແລ້ວມີພາຍຸໃຫຍ່ໄດ້ເກີດຂຶ້ນ ຄື້ນໃຫຍ່ກໍຊັດເຂົ້າໄປໃນເຮືອຈົນນ້ຳຊິເຕັມເຮືອ
ເກືອບຊິລົ້ມຈົມແລ້ວ
4:38 ສ່ວນ ພຣະເຢຊູ ເພິ່ນກໍນອນໜຸນໝອນຫລັບຢູ່ທ້າຍເຮືອ ແລ້ວພວກລູກສິດກໍ
ເກີດຢ້ານພາກັນມາປຸກເພິ່ນ ເວົ້າວ່າ “ນາຍເຈົ້າຂ້າໆ ພວກຜູ້ຂ້າພວມຊິພິນາດຢູ່
ແລ້ວ ທ່ານບໍ່ໄດ້ເປັນຫ່ວງພວກຜູ້ຂ້າຊັ່ນບໍ້”
4:39 ແລ້ວເພິ່ນໄດ້ລຸກຂຶ້ນຈັ່ງຫ້າມລົມແລ້ວເວົ້າກັບທະເລວ່າ “ໃຫ້ງຽບສະຫງົບເດີ້”
ເວົ້າແລ້ວລົມກໍເຊົາກັບບ່ອນ ນ້ຳກໍນິດຈັດໄປທົ່ວ
4:40 ແລ້ວເພິ່ນຈັ່ງເວົ້າກັບລູກສິດວ່າ “ເປັນຫຍັງພວກເຈົ້າຢ້ານຄືນີ້ ເປັນຫຍັງຄືບໍ່ມີ
ຄວາມເຊື່ອຊັ່ນບໍ້”

4:41 ຝ່າຍພວກເຂົາກໍຢ້ານຢ່າງໃຫຍ່ ເວົ້າກັນວ່າ “ຜູ້ນີ້ເປັນຄົນແບບໃດນໍ້ ແມ່ນແຕ່
ລົມກັບທະເລກໍຍັງເຊື່ອຟັງເພິ່ນເອົາ ໂລດ ”

## ມາຣະໂກ ບົດທີ 5

5:1 ພໍ ພຣະເຢຊູ ກັບພວກລູກສິດຂ້າມທະເລ *ກາລີເລ* ແລ້ວ ກໍເຂົ້າໄປຢູ່ເຂດຂອງ
ຊາວກາດາຣາ
5:2 ແລ້ວພໍເພິ່ນຂຶ້ນຈາກເຮືອ ທວ່າງນັ້ນພໍດີມີຜູ້ຊາຍຄົນໜຶ່ງອອກມາຈາກພວກ
ອຸບໂມງຝັງສົບມີຜີໂສໂຄກເຂົ້າສິງ ໄດ້ມາຫາເພິ່ນ
5:3 ຊຶ່ງຄົນນັ້ນອາໄສຢູ່ຕາມອຸບໂມງຝັງສົບ ກັບບໍ່ມີໃຜຊິຜູກມັດຕົວເຂົາໄວ້ໄດ້ເລີຍ
ແມ່ນແຕ່ລ່າມໂສ້ໄວ້ກໍຍັງບໍ່ຢູ່
5:4 ຍ້ອນວ່າເຄີຍລ່າມໂສ້ໃສ່ຫລາຍເທື່ອມາແລ້ວ ເຂົາກໍຫັກໂສ້ກັບຟາດໂສ້ໃຫ້ຫັກ
ເປັນທ່ອນສ່ວນ ແລ້ວບໍ່ມີໃຜສາມາດເຮັດໃຫ້ເຊື່ອງໃຫ້ເຊົາໄດ້
5:5 ແລ້ວທັງກາງເວັນກັບກາງຄືນ ທາລາງເທື່ອເຂົາກໍຂຶ້ນໄປຢູ່ໃນພູເຂົາ ລາງເທື່ອ
ຢູ່ຕາມອຸບໂມງ ແລ້ວລາງເທື່ອຮ້ອງໄຫ້ເອົາຫີນມາປາດມາເຊືອດໂຕເອງ
5:6 ແຕ່ບັດພໍເຂົາເຫັນ ພຣະເຢຊູ ຢູ່ແຕ່ໄກໆ ເຂົາກໍແລ່ນເຂົ້າມາເຄົາລົບບູຊາເພິ່ນ
5:7 ແລ້ວເຂົາໄດ້ຮ້ອງສຽງດັ່ງວ່າ “ຂ້າແຕ່ ພຣະເຢຊູ ພຣະບຸດ ຂອງພຣະເຈົ້າຜູ້ສູງ
ສຸດເອີຍ ຜູ້ຂ້າມີອິຫຍັງກ່ຽວຂ້ອງກັບທ່ານບໍ້ ຜູ້ຂ້າຂໍໃນພຣະນາມຂອງພຣະເຈົ້າ
ຢ່າສູ່ທໍລະມານຜູ້ຂ້າທ້ອນ”
5:8 ທີ່ຜີເວົ້າແນວນີ້ ຍ້ອນວ່າ ພຣະເຢຊູ ໄດ້ສັ່ງມັນວ່າ “ອ້າຍຜີໂສໂຄກ ໃຫ້ມຶງອອກ
ມາຈາກຄົນນີ້ເດີ້”
5:9 ແລ້ວເພິ່ນຖາມມັນວ່າ “ມຶງຊື່ອິຫຍັງ” ມັນຕອບວ່າ “ຊື່ກອງ ຍ້ອນວ່າພວກຜູ້ຂ້າ
ມີຫລາຍໂຕນໍາກັນ”
5:10 ແລ້ວມັນໄດ້ອ້ອນວອນເພິ່ນຫລາຍເທື່ອ ເພື່ອບໍ່ໃຫ້ໄລ່ມັນອອກຈາກເຂດນັ້ນ
5:11 ບັດນີ້ຢູ່ບ່ອນນັ້ນມີໝູກຸ່ມໃຫຍ່ກຸ່ມໜຶ່ງ ພວມຫາກິນຢູ່ໃກ້ພູເຂົາ
5:12 ແລ້ວຜີໝູ່ນັ້ນກໍຂໍກັບເພິ່ນວ່າ “ຂໍໃຫ້ສົ່ງພວກຜູ້ຂ້າເຂົ້າໄປຢູ່ໃນໝູກຸ່ມນີ້ທ້ອນ”
5:13 ແລ້ວ ພຣະເຢຊູ ໄດ້ອະນຸຍາດໃຫ້ມັນ ໂລດ ໝູ່ຜີໂສໂຄກນັ້ນເລີຍອອກຈາກ
ຄົນນັ້ນໄປ ເຂົ້າສິງຢູ່ໃນກຸ່ມໝູ ໝູກຸ່ມນັ້ນມີຢູ່ປະມານ 2,000 ໂຕ ບັດນີ້ພໍຜີເຂົ້າໝູ

ແລ້ວ ໝູທັງກຸ່ມກໍຕື່ນແລ່ນໂດດໜ້າຜາໜ້ອງຊັນໆ ລົງໄປໃນທະເລ *ກາລີເລ* ຈົມ
ນ້ຳຕາຍໝົດ
5:14 ແລ້ວຝ່າຍພວກຄົນລ້ຽງໝູຕ່າງຄົນຕ່າງໜີອອກໄປ ບອກເລື່ອງນັ້ນທັງໃນ
ເມືອງ ທັງບ້ານນອກບ້ານນານຳ ແລ້ວພວກໄທບ້ານໄທເມືອງກໍໄດ້ອອກມາເບິ່ງ
ເຫດການແນວທີ່ເປັນໄປນັ້ນ
5:15 ແລ້ວບັດພໍພວກນັ້ນໄດ້ມາຫາ ພຣະເຢຊູ ກັບໄດ້ເຫັນຄົນທີ່ຜີເຄີຍເຂົ້າສິງນັ້ນ
ພວມນຸ່ງຜ້ານັ່ງຢູ່ ມີສະຕິອາລົມດີ ພວກເຂົາຈັ່ງເກີດຢ້ານຢ່າງໃຫຍ່
5:16 ແລ້ວຜູ້ຄົນທີ່ໄດ້ມາເບິ່ງເຫດການນັ້ນ ກໍອອກໄປບອກຜູ້ອື່ນເຖິງເລື່ອງຄົນທີ່
ຖືກຜີໂສໂຄກເຂົ້າສິງ ກັບແນວທີ່ເກີດກັບກຸ່ມໝູນັ້ນນຳ
5:17 ແລ້ວພວກຄົນຢູ່ຫັ້ນກໍພາກັນຂໍນຳ ພຣະເຢຊູ ໃຫ້ອອກໄປຈາກເຂດແດນເມືອງ
ຂອງເຂົາ
5:18 ແລ້ວບັດເພິ່ນພວມລົງເຮືອ ຄົນທີ່ຜີໄດ້ສິງມາກ່ອນນັ້ນ ໄດ້ອ້ອນວອນ ຂໍຕິດ
ຕາມເພິ່ນໄປນຳ
5:19 ແຕ່ວ່າ ພຣະເຢຊູ ບໍ່ອະນຸຍາດ ເລີຍບອກເຂົາວ່າ “ໃຫ້ເມືອບ້ານຊະ ໄປຫາ
ພວກພ້ອງຂອງເຈົ້າເດີ້ ແລ້ວບອກເຂົາເຖິງແນວຍິ່ງໃຫຍ່ທີ່ອົງພຣະຜູ້ເປັນເຈົ້າໄດ້
ເຮັດໃຫ້ເຈົ້າເດີ້ ຄືເພິ່ນໄດ້ເມດຕາເຈົ້າແລ້ວ”
5:20 ແລ້ວຄົນຜູ້ນັ້ນໄດ້ລາ ພຣະເຢຊູ ແລ້ວຈັ່ງອອກໄປປະກາດໃນບໍລິເວນພື້ນທີ່
ສິບເມືອງ ສິບເມືອງ ນັ້ນ ເຖິງເລື່ອງອັນໃຫຍ່ຫລວງຕ່າງໆ ແນວທີ່ເພິ່ນໄດ້ເຮັດໃຫ້
ເຂົາ ແລ້ວໝົດຄູ່ຄົນຢູ່ຫັ້ນກໍແປກໃຈເປັນຕາງຶດ
5:21 ແລ້ວບັດ ພຣະເຢຊູ ລົງເຮືອຂ້າມທະເລ *ກາລີເລ* ຫລົບໄປຟາກຝັ່ງພູ້ນແລ້ວ
ບັດເພິ່ນຍັງຢູ່ຝັ່ງ ມີຄົນຫລວງຫລາຍໄດ້ໂຮມກັນເຂົ້າມາຫາເພິ່ນ
5:22 ແລ້ວ ນີ້ແຫລະ ມີຜູ້ໜຶ່ງໃນຝ່າຍບໍລິຫານສາລາທຳຊື່ ຢາອີໂຣ ພໍໄດ້ເຫັນ
ພຣະເຢຊູ ລາວກໍຂາບຕີນຂອງເພິ່ນ
5:23 ແລ້ວຈັ່ງອ້ອນວອນເພິ່ນຢ່າງຈິງຈັງວ່າ “ລູກສາວນ້ອຍ ຂອງຜູ້ຂ້າປ່ວຍເປັນໄຂ້
ແຮງໃກ້ຊິຕາຍແລ້ວ ຜູ້ຂ້າຈັ່ງຂໍຮ້ອງໃຫ້ທ່ານໄປວາງມືເທິງເຂົາແໜ່ ເພື່ອເຂົາຈັ່ງຊິ
ເຊົາເປັນໄຂ້ ມີຊີວິດຢູ່ລອດຕໍ່ອີກ”

5:24 ແລ້ວ ພຣະເຢຊູ ເລີຍໄປກັບ ລາວ ແລ້ວຈັ່ງມີຄົນຫລວງຫລາຍໄດ້ຕາມໄປຈົນ
ບຽດສຽດເພິ່ນ
5:25 ແລ້ວມີແມ່ຍິງຄົນໜຶ່ງມີ ອາການ ຕົກເລືອດໄດ້ສິບສອງປີມາແລ້ວ
5:26 ແລ້ວນາງນັ້ນເຄີຍລຳບາກຫລາຍອັນຫລາຍແນວຈາກມືໝໍຫລາຍຄົນ ກັບໄດ້
ເສຍເງິນເສຍເງິນຈົນໝົດໄປ ແຕ່ກໍບໍ່ເຊົາ ດີບໍ່ດີແຮງເປັນຕື່ມ
5:27 ບັດນາງນັ້ນໄດ້ຍິນເຖິງເລື່ອງ ພຣະເຢຊູ ນາງກໍຍ່າງໄປຕາມຫລັງພວກຄົນທີ່
ບຽດສຽດເພິ່ນ ແລ້ວຢື້ມືອອກໄປແປະໃສ່ເສື້ອຄຸມຍາວຂອງເພິ່ນ
5:28 ຄືນາງເຄີຍເວົ້າໃນໃຈວ່າ “ຄັ່ນເຮົາພຽງແຕ່ເອົາມືໃສ່ເສື້ອຄຸມຍາວຂອງເພິ່ນ
ເຮົາກໍຊິເຊົາເປັນດີໄດ້”
5:29 ແລ້ວໃນຍາມນັ້ນພໍດີ ອາການ ເລືອດຕົກຂອງນາງກໍແຫ້ງລົງ ໂລດ ແລ້ວນາງ
ກໍຮູ້ສຶກໂຕວ່າ ອາການ ນັ້ນເຊົາຄັກແລ້ວ
5:30 ແລ້ວໃນຫວ່າງນັ້ນພໍດີ ພຣະເຢຊູ ໄດ້ຮູ້ເນື່ອໂຕວ່າມີພະລັງໄດ້ອອກຈາກໂຕ
ເພິ່ນໄປ ຈັ່ງຫລຽວຫລັງເບິ່ງໝູ່ຄົນຫລວງຫລາຍນັ້ນທີ່ບຽດສຽດເພິ່ນ ຈັ່ງຖາມວ່າ
“ແມ່ນໃຜເອົາມືແປະໃສ່ເສື້ອຂອງເຮົາ”
5:31 ແລ້ວພວກລູກສິດກໍເວົ້າກັບເພິ່ນວ່າ “ທ່ານເອີຍ ເຫັນບໍ້ ມີຄົນຫລວງຫລາຍ
ພວມບຽດສຽດທ່ານຢູ່ ແລ້ວທ່ານຍັງຊິຖາມອີກບໍ້ ວ່າ ‘ແມ່ນໃຜເອົາມືແປະໃສ່
ເຮົາ’”
5:32 ແລ້ວເພິ່ນໄດ້ຫລຽວເບິ່ງລ້ອມຮອບອີກ ຈັ່ງເຫັນນາງຜູ້ນັ້ນທີ່ໄດ້ເອົາມືໃສ່ເພິ່ນ
5:33 ບັດນີ້ ນາງນັ້ນເກີດຢ້ານຈົນໂຕສັ່ນທຶດໆ ຍ້ອນໄດ້ຮູ້ວ່ານາງເອງເປັນຜູ້ນັ້ນທີ່
ໄດ້ຮັບການປົວ ຈັ່ງໄດ້ມາຂາບລົງຕໍ່ໜ້າເພິ່ນ ແລ້ວເວົ້າຄວາມຈິງໃຫ້ເພິ່ນຟັງເລື່ອງ
ຂອງນາງໝົດຄູ່ແນວ
5:34 ແລ້ວ ພຣະເຢຊູ ໄດ້ບອກນາງວ່າ “ລູກສາວເອີຍ ທີ່ເຈົ້າເຊົາ ອາການ ນັ້ນກໍ
ຍ້ອນຄວາມເຊື່ອໄວ້ວາງໃຈຂອງນາງ ໃຫ້ໄປດ້ວຍຄວາມສະຫງົບສຸກເຖີ ກັບໃຫ້
ເຊົາເປັນດີເດີ້”

5:35 ພໍບັດ ພຣະເຢຊູ ຍັງເວົ້າກັບນາງຢູ່ ໄດ້ມີຜູ້ລາງຄົນອອກຈາກເຮືອນຂອງນາຍ
ບໍລິຫານສາລາທຳ ບອກ ລາວ ວ່າ “ລູກສາວຂອງເຈົ້າຕາຍແລ້ວ ບໍ່ຕ້ອງລົບກວນ
ອາຈານອີກດອກ”
5:36 ພໍ ພຣະເຢຊູ ໄດ້ຍິນແນວທີ່ເຂົາວ່ານັ້ນ ເພິ່ນຈັ່ງບອກນາຍບໍລິຫານສາລາທຳ
ວ່າ “ຢ່າຊູ່ຢ້ານເລີຍ ໃຫ້ເຊື່ອວາງໃຈເທົ່ານັ້ນເດີ້”
5:37 ແລ້ວ ພຣະເຢຊູ ສັ່ງໄວ້ບໍ່ໃຫ້ຜູ້ໃດຕາມເພິ່ນໄປ ມີແຕ່ ເປໂຕ ຢາໂກໂບ ກັບ
ໂຢຮັນ ນ້ອງຊາຍຂອງ ຢາໂກໂບ ເທົ່ານັ້ນ
5:38 ແລ້ວບັດເພິ່ນຮອດເຮືອນນາຍບໍລິຫານສາລາທຳແລ້ວ ກໍຫລຽວເບິ່ງ ໄດ້ເຫັນ
ມີການວຸ້ນວາຍ ມີແຕ່ຄົນຮ້ອງໄຫ້ຮ້ອງໄຫ້ຫລາຍ
5:39 ແລ້ວບັດເພິ່ນເຂົ້າໄປຈັ່ງຖາມພວກເຂົາວ່າ “ພວກເຈົ້າຮ້ອງໄຫ້ວຸ້ນວາຍຫລາຍ
ຍ້ອນຫຍັງ ນາງນ້ອຍນັ້ນບໍ່ຕາຍດອກ ແຕ່ນອນຫລັບຢູ່ຊື່ໆ”
5:40 ແລ້ວພວກເຂົາກໍພາກັນຫົວເຍາະເຍີ້ຍເພິ່ນຢ່າງໃຫຍ່ ແຕ່ບັດເພິ່ນໃຫ້ພວກ-
ເຂົາອອກໄປແລ້ວ ເພິ່ນຈັ່ງນຳເອົາພໍ່ແມ່ຂອງນາງນ້ອຍກັບພວກລູກສິດທີ່ຢູ່ກັບ
ເພິ່ນ ເຂົ້າໄປໃນບ່ອນທີ່ນາງນ້ອຍຢູ່
5:41 ແລ້ວເພິ່ນໄດ້ຈັບມືນາງນ້ອຍນັ້ນ ເວົ້າກັບນາງວ່າ “ ຕາລິທາ ກຸມ” ແປວ່າ “ທິ-
ດານ້ອຍເອີຍ ເຮົາບອກເຈົ້າໃຫ້ລຸກຂຶ້ນເດີ້”
5:42 ແລ້ວໃນຍາມນັ້ນພໍດີ ນາງນ້ອຍກໍລຸກຂຶ້ນຍ່າງອອກໄປ ໂດຍວ່ານາງນ້ອຍນັ້ນ
ອາຍຸໄດ້ສິບສອງປີແລ້ວ ບັດນີ້ໝົດຄູ່ຄົນກໍແປກໃຈເປັນຕາງຶດຢ່າງໃຫຍ່
5:43 ແລ້ວເພິ່ນໄດ້ສັ່ງພວກເຂົາຢູ່ຫັ້ນໄວ້ ບໍ່ໃຫ້ຜູ້ໃດຮູ້ເຖິງແນວທີ່ເປັນໄປນີ້ ແລ້ວໄດ້
ບອກອີກວ່າ ຄວນຊິເອົາແນວກິນມາໃຫ້ນາງນ້ອຍກິນຊະ

## ມາຣະໂກ ບົດທີ 6

6:1 ແລ້ວເພິ່ນໄດ້ອອກຈາກໝ້ອງນັ້ນ ເຂົ້າໄປແຖວບ້ານເມືອງຂອງເພິ່ນ ແລ້ວພວກ
ລູກສິດຂອງເພິ່ນກໍໄດ້ຕາມເພິ່ນໄປ
6:2 ແລ້ວພໍຮອດມື້ພັກງານຂອງ ຊາວຢິວ ເພິ່ນໄດ້ຕັ້ງຕົ້ນເລີ່ມສອນໃນສາລາທຳ
ແລ້ວມີຄົນຫລວງຫລາຍທີ່ໄດ້ຍິນເພິ່ນ ຈັ່ງແປກໃຈເປັນຕາງຶດຂະໜາດ ເລີຍເວົ້າ

ກັບວ່າ “ໂອ້ ຜູ້ນີ້ໄດ້ຄວາມຄຶດແນວນີ້ມາແຕ່ໃສ ກັບສະຕິປັນຍານີ້ແມ່ນໃຜເອົາໃຫ້
ຈັ່ງຊິສາມາດເຮັດແນວມະຫັດສະຈັນອັນເປັນຕາງຶດໄດ້ຄືນີ້
6:3 ຜູ້ນີ້ຄືເປັນຊ່າງໄມ້ທີ່ເປັນລູກຊາຍນາງ ມາຣິອາ ບໍ່ແມ່ນບໍ້ ກັບເປັນອ້າຍຂອງ
ຢາໂກໂບ ໂຢເສ ຢູດາ ກັບ ຊີໂມນ ບໍ່ແມ່ນບໍ້ ແລ້ວພວກນ້ອງສາວຂອງເຂົາກໍຢູ່
ນຳພວກເຮົາຢູ່ພີ້ ບໍ່ແມ່ນບໍ້” ແລ້ວພວກເຂົາທັງຫລາຍຈັ່ງເກີດຊຸ່ນເຄືອງບໍ່ພໍໃຈນຳ
ເພິ່ນ
6:4 ແຕ່ ພຣະເຢຊູ ເວົ້າກັບເຂົາວ່າ “ຜູ້ເປັນປາກເປັນສຽງຂອງພຣະເຈົ້າຄົນໃດຊິບໍ່
ຂາດຄົນໃຫ້ກຽດດອກ ນອກຈາກໃນບ້ານເມືອງຂອງໂຕເອງ ກັບໃນໝູ່ພວກ
ຍາດພີ່ນ້ອງຂອງໂຕ ກັບໃນວົງວານຂອງໂຕ ທີ່ຊິບໍ່ໃຫ້ກຽດ”
6:5 ຈັ່ງຊັ້ນ ເພິ່ນຈັ່ງບໍ່ ອາດ ເຮັດແນວມະຫັດສະຈັນອັນເປັນຕາງຶດໃຫ້ເຂົາໄດ້ ນອກ
ຈາກວາງມືໃສ່ຄົນເຈັບປ່ວຍໄຂ້ຜູ້ລາງຄົນໃຫ້ເຂົາເຊົາເປັນດີ
6:6 ແລ້ວເພິ່ນຈັ່ງແປກໃຈພວກຄົນຢູ່ຫັ້ນຍ້ອນຄວາມບໍ່ເຊື່ອຂອງເຂົາ ແລ້ວເພິ່ນ
ເລີຍອອກໄປສອນຕາມໝູ່ບ້ານຢູ່ລ້ອມຮອບ
6:7 ແລ້ວເພິ່ນໄດ້ເອີ້ນພວກລູກສິດສິບສອງຄົນນັ້ນມາ ແລ້ວເລີ່ມໃຊ້ເຂົາອອກໄປ
ເປັນຄູ່ໆ ແລ້ວໄດ້ມອບອຳນາດໃຫ້ເຂົາສາມາດຂັບຜີໂສໂຄກອອກໄດ້
6:8 ກັບສັ່ງເຂົາໄວ້ບໍ່ໃຫ້ເອົາອີຫຍັງໄປເພື່ອໃຊ້ຕາມທາງ ນອກຈາກໄມ້ເທົ້າແນວ
ດຽວ ແຕ່ບໍ່ໃຫ້ພົກແນວອື່ນໄປນຳ ບໍ່ວ່າຊິເປັນແນວກິນ ຫລືຍ່າມພາຍ ຫລືເງິນໃສ່
ກະເປົາໄປ
6:9 ກັບໃຫ້ໃສ່ເກີບ ແລ້ວບໍ່ໃຫ້ນຸ່ງເສື້ອສອງໂຕ
6:10 ແລ້ວເພິ່ນໄດ້ບອກເຂົາວ່າ “ເມືອງໃດໆ ທີ່ພວກເຈົ້າໄປ ເຂົ້າອາໄສຢູ່ໃນເຮືອນ
ໃດໆ ກໍໃຫ້ຢູ່ເຮືອນນັ້ນເລີຍ ຈົນກວ່າຊິອອກຈາກໝ້ອງນັ້ນໄປຕໍ່
6:11 ແລ້ວຜູ້ໃດບໍ່ຕ້ອນຮັບບໍ່ຟັງພວກເຈົ້າ ບັດຊິໄປຈາກໝ້ອງນັ້ນ ໃຫ້ສະບັດດິນ
ອອກຈາກພື້ນເກີບຂອງເຈົ້າ ໃຫ້ເປັນຄຳພະຍານຕໍ່ເຂົາ ເຮົາຊິບອກຄວາມຈິງໃຫ້
ພວກເຈົ້າເດີ້ ຄືໃນມື້ພິພາກສາທີ່ຊິມາພາຍໜ້ານັ້ນ ໂທດຂອງເມືອງ ໂສໂດມ ກັບ
ເມືອງ ໂກໂມຣາ ກໍຊິເບົາກວ່າໂທດທີ່ຊິລົງໃສ່ເມືອງນັ້ນ”
6:12 ແລ້ວພວກລູກສິດກໍອອກໄປ ຈັ່ງປະກາດສອນໃຫ້ໝົດຄູ່ຄົນກັບໃຈໃໝ່

6:13 ແລ້ວພວກເຂົາໄດ້ຂັບໄລ່ຜີອອກໄປຫລາຍໂຕ ກັບໄດ້ເອົານໍ້າມັນເຈີມຄົນເຈັບ
ຄົນໄຂ້ຫລາຍຄົນໃຫ້ເຊົາປ່ວຍເປັນດີ
6:14 ແລ້ວຊື່ ພຣະເຢຊູ ໄດ້ເລື່ອງລືອອກໄປ ຈັ່ງໄດ້ມາຮອດຫູກະສັດ ເຮໂຣດ ແລ້ວ
ເຮໂຣດ ເລີຍເວົ້າວ່າ “ຜູ້ທີ່ອອກລິດເຮັດແນວມະຫັດສະຈັນອັນເປັນຕາງຶດແນວໝູ່
ນີ້ ໜ້າຊິເປັນ ໂຢຮັນ ຜູ້ໃຫ້ຮັບຈຸ່ມນໍ້ານັ້ນທີ່ເປັນຂຶ້ນມາຈາກຕາຍ”
6:15 ແຕ່ຄົນອື່ນໆ ເວົ້າວ່າ “ຜູ້ນັ້ນເປັນ ເອລີຢາ ” ແລ້ວຜູ້ລາງຄົນກໍເວົ້າວ່າ “ມັນເປັນ
ຜູ້ເປັນປາກເປັນສຽງຂອງພຣະເຈົ້າ ຫລືເປັນຄົນເອົາແບບຜູ້ເປັນປາກເປັນສຽງຜູ້
ໜຶ່ງ”
6:16 ແຕ່ພໍ ເຮໂຣດ ໄດ້ຍິນຄວາມເວົ້າແນວນັ້ນ ຈັ່ງເວົ້າຂັດຄ້ານວ່າ “ *ບໍ່ແມ່ນດອກ*
ມັນເປັນ ໂຢຮັນ ນັ້ນອີຫລີ ຄືຊິແມ່ນຄົນທີ່ເຮົາສັ່ງຕັດຫົວນັ້ນເນາະ ລາວ ໄດ້ເປັນ
ຂຶ້ນມາຈາກຕາຍແລ້ວ”
6:17 ຄື ເຮໂຣດ ເຄີຍໃຊ້ຄົນໄປຈັບ ໂຢຮັນ ແລ້ວລ່າມໂສ້ຂັງຄຸກໄວ້ ຍ້ອນ ເຮໂຣດ
ເຫັນແກ່ນາງ ເຮໂຣເດຍ ເມຍຂອງ ຟີລິບ ນ້ອງຊາຍຂອງ ລາວ ຄື ເຮໂຣດ ໄດ້
ເອົານາງມາເປັນເມຍຂອງໂຕເອງແລ້ວ
6:18 ຄືວ່າ ໂຢຮັນ ເຄີຍບອກ ເຮໂຣດ ວ່າ “ເຈົ້າເຮັດຜິດກົດບັນຍັດແລ້ວ ທີ່ໄດ້ຮັບ
ເອົາເມຍຂອງນ້ອງຊາຍມາເປັນຂອງໂຕ”
6:19 ຈັ່ງຊັ້ນ ນາງ ເຮໂຣເດຍ ຈັ່ງຄຽດແຄ້ນໃສ່ ໂຢຮັນ ຢາກຂ້າ ລາວ ຊໍ້າແຕ່ຂ້າບໍ່
ໄດ້ *(ຍ້ອນບໍ່ມີສິດ)*
6:20 ຄືວ່າ ເຮໂຣດ ນັ້ນເຄົາລົບ ໂຢຮັນ ຍ້ອນຮູ້ວ່າ ໂຢຮັນ ເປັນຄົນທ່ຽງທຳອັນຖືກ
ຕ້ອງບໍລິສຸດ ຈັ່ງເບິ່ງແຍງປົກປ້ອງ ລາວ ໄວ້ *(ຈາກນາງນັ້ນ)* ເຮໂຣດ ເຄີຍປະຕິ-
ບັດຕາມຄຳປຶກສາຂອງ ລາວ ກັບຮັບຟັງ ລາວ ດ້ວຍຄວາມຍິນດີ
6:21 ບັດມາຮອດມື້ຍາມດີທີ່ຊິສະຫລອງມື້ເກີດຂອງ ເຮໂຣດ ເພິ່ນໃຫ້ຈັດການລ້ຽງ
ພວກຜູ້ປົກຄອງກັບພວກນາຍທະຫານຊັ້ນຜູ້ໃຫຍ່ ພ້ອມພວກຜູ້ສຳຄັນໆ ທີ່ມີໜ້າມີ
ຕາທັງໝົດໃນແຄວ້ນ ກາລີເລ ນັ້ນ

6:22 ແລ້ວບັດລູກສາວຂອງນາງ ເຮໂຣເດຍ ເຂົ້າມາເຕັ້ນລຳ ແລ້ວ ເຮໂຣດ ກັບແຂກ
ທັງຫລາຍຊຶ່ງນັ່ງຮ່ວມກັນຢູ່ຫັ້ນພໍໃຈຫລາຍ ກະສັດ ເຮໂຣດ ຈັ່ງເວົ້າກັບນາງນັ້ນ
ວ່າ "ນາງຊິຂໍອີຫຍັງຈາກເຮົາ ເຮົາກໍຊິໃຫ້ແນວນັ້ນ ໂລດ "
6:23 ແລ້ວເພິ່ນຈັ່ງຮັບປາກເປັນຄຳສາບານຕໍ່ນາງນັ້ນວ່າ "ນາງຊິຂໍອີຫຍັງຈາກເຮົາ
ເຮົາກໍຊິໃຫ້ແນວນັ້ນ ຮອດເຄິ່ງລາຊະສົມບັດຂອງເຮົາ ໂລດ "
6:24 ນາງນັ້ນຈັ່ງອອກໄປຖາມແມ່ວ່າ "ແມ່ຊິໃຫ້ລູກຂໍອີຫຍັງດີ" ແມ່ຈັ່ງຕອບວ່າ "ໃຫ້
ຂໍຫົວຂອງ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳນັ້ນເອົາ ໂລດ ເດີ້"
6:25 ໃນຍາມນັ້ນພໍດີນາງນັ້ນກໍກັບໄປບອກກະສັດ ເຮໂຣດ ວ່າ "ຜູ້ຂ້າຂໍຫົວຂອງ
ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນ້ຳນັ້ນເນາະ ໃສ່ຖາດມາໃຫ້ຜູ້ຂ້າທັນທີ"
6:26 ບັດນີ້ກະສັດນັ້ນທຸກໃຈຫລາຍ ແຕ່ວ່າຍ້ອນໄດ້ສາບານໄວ້ກັບນາງ ແລ້ວຍ້ອນ
ເຫັນແກ່ພວກແຂກຜູ້ທີ່ນັ່ງພາເຂົ້າຢູ່ນຳກັນ ເລີຍປະຕິເສດນາງບໍ່ໄດ້
6:27 ແລ້ວໃນຍາມນັ້ນ ກະສັດຈັ່ງຮັບສັ່ງຜູ້ປະຫານໃຫ້ໄປຕັດຫົວຂອງ ໂຢຮັນ ແລ້ວ
ໃຫ້ເອົາມາ ຜູ້ປະຫານກໍເລີຍໄປຕັດຫົວຂອງ ໂຢຮັນ ຕອນຢູ່ໃນຄຸກ
6:28 ແລ້ວເອົາຫົວຂອງ ໂຢຮັນ ໃສ່ຖາດມາໃຫ້ນາງນັ້ນ ນາງເລີຍເອົາໄປມອບໃຫ້
ແມ່
6:29 ແລ້ວບັດພໍພວກລູກສິດຂອງ ໂຢຮັນ ໄດ້ຍິນເຖິງເຫດການນັ້ນແລ້ວ ກໍພາກັນ
ມາຮັບເອົາສົບຂອງ ລາວ ໄປຝັງໄວ້ໃນອຸບໂມງ
6:30 ແລ້ວພວກທູດພິເສດຂອງ ພຣະເຢຊູ ໄດ້ຮ່ວມກັນມາຫາເພິ່ນ ບອກເພິ່ນເຖິງ
ໝົດຄູ່ແນວທີ່ເຂົາໄດ້ເຮັດກັບໄດ້ສອນນັ້ນ
6:31 ແລ້ວເພິ່ນໄດ້ບອກພວກເຂົາວ່າ "ໃຫ້ພວກເຮົາໄປຫາບໍລິເວນເປົ່າປ່ຽວ ໄປ
ເຊົາເມື່ອຍຢູ່ຫັ້ນຈັກໜ່ອຍຊະກ່ອນເດີ້" ຄືຫວ່າງນັ້ນມີຄົນໄປໆ ມາໆ ຫລາຍຈົນບໍ່
ມີຍາມຫວ່າງທີ່ຊິກິນເຂົ້ານຳກັນເລີຍ
6:32 ພຣະເຢຊູ ຈັ່ງລົງເຮືອກັບພວກເຂົາວ່າຊິໄປບໍລິເວນເປົ່າປ່ຽວທີ່ບໍ່ມີໃຜລົບ-
ກວນ

6:33 ແລ້ວມີຄົນຫລວງຫລາຍໄດ້ເຫັນ ພຣະເຢຊູ ກັບລູກສິດພວມອອກໄປ ກັບມີ
ຫລາຍຄົນຈື່ເພິ່ນໄດ້ ພວກເຂົາຈັ່ງພາກັນແລ່ນອອກຈາກບ້ານເມືອງໄປຮອດກ່ອນ
ແລ້ວພາກັນເຂົ້າໄປຫາເພິ່ນຢູ່ຫັ້ນ
6:34 ບັດ ພຣະເຢຊູ ຂຶ້ນຈາກເຮືອແລ້ວ ກໍຫລຽວເບິ່ງ ໄດ້ເຫັນຄົນຊຸມໃຫຍ່ນັ້ນ ເພິ່ນ
ເລີຍອີຕົນພວກເຂົາຫລາຍ ຍ້ອນວ່າເຂົາເປັນຄືໝູ່ແກະບໍ່ມີຜູ້ລ້ຽງ ເພິ່ນຈັ່ງຕັ້ງຕົ້ນ
ເລີ່ມສອນເຂົາເປັນຫລາຍອັນຫລາຍແນວ
6:35 ບັດໃກ້ຊິຄໍ່າແລ້ວ ພວກລູກສິດຂອງ ພຣະເຢຊູ ມາເວົ້າກັບເພິ່ນວ່າ "ຢູ່ພີ້ເປັນ
ບໍລິເວນເປົ່າປ່ຽວ ແລ້ວມັນໃກ້ຊິຮອດຄໍ່າແລ້ວ
6:36 ໃຫ້ສົ່ງຄົນພວກນີ້ອອກໄປຊື້ແນວກິນຕາມບ້ານໄຮ່ບ້ານນາຢູ່ແຖວນີ້ຊິເປັນ
ຫຍັງ ຍ້ອນເຂົາບໍ່ມີອີຫຍັງຊິກິນເລີຍ"
6:37 ແຕ່ເພິ່ນເລີຍຕອບລູກສິດວ່າ "ໃຫ້ພວກເຈົ້າລ້ຽງພວກເຂົາເດີ້" ເຂົາຈັ່ງຕອບ
ເພິ່ນວ່າ "ຊິໃຫ້ພວກຜູ້ຂ້າໄປຊື້ແນວກິນສັກສອງຮ້ອຍຫລຽນເດນາຣິອົນໃຫ້ເຂົາ
ກິນບໍ້"
6:38 ເພິ່ນເລີຍຕອບເຂົາອີກວ່າ "ພວກເຈົ້າມີເຂົ້າຈີ່ຢູ່ຈັກກ້ອນ ໄປເບິ່ງ" ບັດນັບ
ແລ້ວເຂົາຈັ່ງບອກວ່າ "ມີເຂົ້າຈີ່ຫ້າກ້ອນກັບປາສອງໂຕ"
6:39 ແລ້ວເພິ່ນຈັ່ງສັ່ງພວກລູກສິດໃຫ້ຈັດໝົດຄູ່ຄົນ ໃຫ້ນັ່ງຮ່ວມກັນເປັນກຸ່ມໆ ຢູ່
ເດີ່ນຫຍ້າຂຽວນັ້ນ
6:40 ແລ້ວພວກຄົນຫລວງຫລາຍຢູ່ຫັ້ນກໍໄດ້ນັ່ງຮ່ວມກັນເປັນກຸ່ມໆ ກຸ່ມລະຮ້ອຍຄົນ
ແດ່ ຫ້າສິບແດ່
6:41 ແລ້ວບັດເພິ່ນໄດ້ຮັບເອົາເຂົ້າຈີ່ຫ້າກ້ອນ ພ້ອມກັບປາສອງໂຕນັ້ນຂຶ້ນມາໄວ້
ແລ້ວ ເພິ່ນກໍເງີຍໜ້າຂຶ້ນເບິ່ງຟ້າສະຫວັນ ແລ້ວຂອບຄຸນຊະກ່ອນ ຈັ່ງບິເຂົ້າຈີ່ນັ້ນ
ເປັນທ່ອນໆ ໃຫ້ພວກລູກສິດນໍາອອກໄປແຈກຈ່າຍໃຫ້ໝົດຄູ່ຄົນ ແລ້ວປາສອງ
ໂຕນັ້ນ ເພິ່ນໄດ້ແບ່ງອອກເປັນທ່ອນໆ ເພື່ອແຈກໃຫ້ໝົດຄູ່ຄົນນໍາ
6:42 ແລ້ວພວກຄົນຢູ່ຫັ້ນໄດ້ກິນອີ່ມໝົດຄູ່ຄົນ
6:43 ສ່ວນເຂົ້າຈີ່ກັບປາທີ່ເຫລືອຢູ່ຫັ້ນ ເຂົາໄດ້ເກັບຮອດສິບສອງກະບຸງເຕັມ
6:44 ແລ້ວຈໍານວນຜູ້ຄົນທີ່ໄດ້ຮັບກິນເຂົ້າຈີ່ນັ້ນ ມີຜູ້ຊາຍປະມານ 5,000 ຄົນ

6:45 ແລ້ວໃນຫວ່າງນັ້ນ ເພິ່ນໄດ້ບອກໃຫ້ພວກລູກສິດຂອງເພິ່ນລົງເຮືອຂ້າມທະເລ
ໄປຍັງອີກຟາກໜຶ່ງເຖິງເມືອງ ເບດໄຊດາ ກ່ອນເພິ່ນ ແລ້ວສ່ວນເພິ່ນກໍຊິຖ້າສົ່ງຄົນ
ຫລວງຫລາຍນັ້ນເມືອບ້ານໝົດຊະກ່ອນ
6:46 ແລ້ວບັດໄດ້ລາຄົນຫລວງຫລາຍນັ້ນໝົດແລ້ວ ກໍຂຶ້ນພູເຂົາເພື່ອໄປອະທິຖານ
ເວົ້ານຳພຣະເຈົ້າຢູ່ຫັ້ນ
6:47 ແລ້ວພໍຮອດຄ່ຳ ຫວ່າງນັ້ນເຮືອຂອງພວກລູກສິດຢູ່ກາງທະເລ ສ່ວນ ພຣະເຢ-
ຊູ ກໍຢູ່ເທິງຝັ່ງແຕ່ຜູ້ດຽວ
6:48 ແລ້ວບັດເພິ່ນຫລຽວເບິ່ງ ໄດ້ເຫັນພວກລູກສິດພາຍເຮືອລຳບາກຫລາຍ ຍ້ອນ
ລົມຕ້ານແຮງ ບັດເວລາຮອດປະມານຍາມທີ່ສີ່ ເພິ່ນຈັ່ງຍ່າງເທິງຜິວນ້ຳທະເລ
ອອກໄປຫາພວກລູກສິດ ວ່າຊິຜ່ານເຂົາໄປ
6:49 ແຕ່ບັດພໍພວກລູກສິດເຫັນເພິ່ນພວມຍ່າງເທິງຜິວນ້ຳ ເຂົາຄຶດວ່າເປັນຜີ ຈັ່ງ
ພາກັນຮ້ອງສຽງດັ່ງກ້ອງອອກໄປ
6:50 ຍ້ອນວ່າເຂົາໝົດຄູ່ຄົນໄດ້ເຫັນເພິ່ນແລ້ວກໍຢ້ານ ແຕ່ໃນຍາມນັ້ນພໍດີເພິ່ນເວົ້າ
ກັບເຂົາວ່າ “ໃຫ້ດີໃຈໄວ້ເດີ້ ແມ່ນໂຕເຮົາເອງ ຢ່າສູ່ຢ້ານເລີຍ”
6:51 ແລ້ວເພິ່ນຈັ່ງເຂົ້າໄປຫາພວກລູກສິດໃນເຮືອ ເຂົ້າແລ້ວລົມກໍເຊົາພັດ ງຽບລົງ
ກັບໝ້ອງ ບັດນີ້ພວກເຂົາກໍເປັນຕາງຶດພໍພິເລີກ ແປກໃຈຫລາຍເຫລືອເກີນ
6:52 ຄືວ່າພວກເຂົາບໍ່ທັນໄດ້ຄາດຄຶດຫລືຄຳນຶງເຖິງ ແນວອັດສະຈັນນີ້ກັບອັດສະ-
ຈັນເລື່ອງເຂົ້າຈີ່ນັ້ນ ບໍ່ເຂົ້າໃຈຍ້ອນວ່າໃຈຂອງພວກເຂົາຍັງອຸດຕັນຢູ່
6:53 ບັດຂ້າມຟາກໄປແລ້ວ ເຂົາຈອດເຮືອຢູ່ຝັ່ງແຄວ້ນເມືອງ ເຄັນເນຊາເຣັດ
6:54 ແລ້ວບັດພໍຂຶ້ນຈາກເຮືອແລ້ວ ໝົດຄູ່ຄົນຢູ່ຫັ້ນໄດ້ຈື່ ພຣະເຢຊູ ໂລດ
6:55 ແລ້ວຕ່າງຄົນຕ່າງແລ່ນອອກໄປລ້ອມຮອບບອກກັນຢູ່ຫັ້ນວ່າເພິ່ນມາແລ້ວ
ບອກກັນໄປຮອດທົ່ວແຄວ້ນ ແລ້ວຄົນທີ່ຮັບຮູ້ຈັ່ງເອົາຄົນເຈັບປ່ວຍໄຂ້ໃສ່ສາດໃສ່
ເສື່ອ ພາກັນແບກຫາມມາຍັງໝ້ອງທີ່ ພຣະເຢຊູ ຊິຜ່ານ ຕາມທີ່ເຂົາໄດ້ຍິນຂ່າວ
ນັ້ນ
6:56 ຄືວ່າ ເພິ່ນເຂົ້າໝ້ອງໃດ ຜ່ານໝ້ອງໃດ ບໍ່ວ່າຊິເປັນໝູ່ບ້ານ ຕາແສງ ຫລືເມືອງ
ໃຫບ້ານນັ້ນກໍເອົາຄົນເຈັບປ່ວຍໄຂ້ອອກມາວາງຕາມຖະໜົນ ແລ້ວຂໍອະນຸຍາດ

ໃຫ້ພວກເຈັບປ່ວຍໄຂ້ພຽງແຕ່ເອົາມືໃສ່ຜູ້ຊາຍເສື້ອຄຸມຍາວຂອງເພິ່ນ ແລ້ວຜູ້ທີ່
ເອົາມືໃສ່ຜູ້ຊາຍເສື້ອຂອງເພິ່ນນັ້ນ ໄດ້ເຊົາເປັນດີກັບໝົດ

## ມາຣະໂກ ບົດທີ 7

7:1 ຫວ່າງນັ້ນພໍດີ ມີພວກ ຟາຣີຊາຍ ກັບຜູ້ລາງຄົນໃນພວກນັກທຳມາຈາກ ກຸງເຢ-
ຣູຊາເລັມ ໄດ້ພາກັນມາຫາ ພຣະເຢຊູ
7:2 ແລ້ວບັດພໍພວກນີ້ເຫັນພວກລູກສິດຂອງ ພຣະເຢຊູ ຜູ້ລາງຄົນ ກິນເຂົ້າໂດຍມື
ເປັນມົນທິນ ໂດຍວ່າພວກລູກສິດບໍ່ໄດ້ລ້າງມືຕາມພິທີກ່ອນຊິກິນ ຄົນພວກນັ້ນຈັ່ງ
ໂຈມຕີເຂົາ
7:3 ຄືວ່າ ພວກ ຟາຣີຊາຍ ຮ່ວມກັນທັງພວກຢິວທັງໝົດຖືກັນຢ່າງເຄັ່ງຄັດຕາມປະ-
ເພນີສືບທອດກັນມາແຕ່ປູ່ທວດວ່າ ນອກຈາກໄດ້ລ້າງມືຕາມພິທີພິເສດ ກໍບໍ່ໃຫ້
ກິນເລີຍ
7:4 ແລ້ວບັດພໍມາຈາກຕະຫລາດ ຄັ່ນບໍ່ໄດ້ລ້າງມືກ່ອນ ພວກເຂົາກໍບໍ່ກິນຄືກັນ
ແລ້ວກໍມີທຳນຽມອື່ນໆ ອີກຫລາຍອັນຫລາຍແນວຊຶ່ງເຂົາໄດ້ຮັບກັນມາໃຫ້ຖືນຳ ຄື
ການລ້າງຖ້ວຍລ້າງຈອກ ກາຕົ້ມນ້ຳໝໍ້ນ້ຳ ເຄື່ອງໃຊ້ທອງເຫລືອງ ພ້ອມລ້າງໝ້ອງ
ວາງແນວກິນນຳ *ຕາມປະເພນີ*
7:5 ແລ້ວພວກ ຟາຣີຊາຍ ກັບນັກທຳນັ້ນ ຈັ່ງຖາມ ພຣະເຢຊູ ວ່າ “ເປັນຫຍັງພວກ
ລູກສິດຂອງເຈົ້າບໍ່ໄດ້ເຮັດຕາມປະເພນີຂອງປູ່ທວດ ຄືເຂົາກິນໂດຍບໍ່ໄດ້ລ້າງມື
*ຕາມປະເພນີ* ກ່ອນ”
7:6 ເພິ່ນເລີຍຕອບພວກເຂົາວ່າ “ຜູ້ເປັນປາກເປັນສຽງ ເອຊາຢາ ໄດ້ເວົ້າຄຳທຳ-
ນາຍໄວ້ຖືກຕ້ອງພໍແຮງແລ້ວ ເຖິງຄົນໜ້າຊື່ໃຈຄົດຄືກັນກັບພວກເຈົ້າ ຕາມທີ່
ລາວ ຂຽນໄວ້ວ່າ ‘ຄົນພວກນີ້ໃຫ້ກຽດເຮົາແຕ່ປາກເຂົາ ແຕ່ວ່າໃຈຂອງເຂົາຫ່າງໄກ
ຈາກເຮົາຫລາຍ
7:7 ຈັ່ງຊັ້ນ ການທີ່ເຂົາເຄົາລົບບູຊາເຮົານັ້ນກໍບໍ່ມີສາລະປະໂຫຍດເລີຍ ຄືພວກເຂົາ
ເອົາແນວຄວາມຄຶດ ຂອງຄົນມາອ້າງ ແທນທີ່ຊິສອນຫລັກຄຳສອນ *ຂອງພຣະເຈົ້າ*
’

7:8 ຄືພວກເຈົ້າໄດ້ປະຖິ້ມກົດບັນຍັດຂອງພຣະເຈົ້າໄວ້ ແລ້ວຈັ່ງກັບໄປຖືຕາມປະ-
ເພນີຂອງຄົນ ຄືການລ້າງໝໍ້ ລ້າງຖ້ວຍ ລ້າງຈອກ ກັບແນວອື່ນໆ ອີກຫລາຍອັນ
ຫລາຍແນວທີ່ພວກເຈົ້າເຮັດຢູ່"
7:9 ແລ້ວເພິ່ນໄດ້ບອກເຂົາອີກວ່າ "ວິເສດແທ້ນໍ້ ພວກເຈົ້ານີ້ ທີ່ໄດ້ປະຖິ້ມກົດບັນ-
ຍັດຂອງພຣະເຈົ້າ ແລ້ວກໍຖືຕາມປະເພນີຂອງພວກເຈົ້າເອງ"
7:10 ຄືວ່າ ໂມເຊ ໄດ້ລົງໄວ້ວ່າ "ໃຫ້ກຽດພໍ່ແມ່ຂອງໂຕ" ກັບວ່າ "ຜູ້ໃດສາບແຊ່ງພໍ່
ແມ່ ຜູ້ນັ້ນຕ້ອງຖືກປະຫານ"
7:11 ແຕ່ບັດນີ້ ພວກເຈົ້າກັບເປັນວ່າ "ຄັ່ນຜູ້ໃດຊິບອກພໍ່ແມ່ຂອງໂຕວ່າ 'ແນວໃດ
ຂອງຂ້ອຍຊຶ່ງ ອາດ ເປັນປະໂຫຍດຕໍ່ພໍ່ແມ່ ແນວນັ້ນຂໍຖືວ່າເປັນ " ໂກຣະບານ "'
ຊຶ່ງແປວ່າເປັນຂອງຂວັນຖວາຍແດ່ພຣະເຈົ້າ ແລ້ວຜູ້ນັ້ນບໍ່ຕ້ອງຊ່ອຍພໍ່ແມ່ເລີຍ
7:12 ແລ້ວດີບໍ່ດີພວກເຈົ້າຈັ່ງບໍ່ອະນຸຍາດໃຫ້ຜູ້ນັ້ນເຮັດອີຫຍັງ ທີ່ຊ່ອຍເບິ່ງແຍງພໍ່
ແມ່ຂອງໂຕຕໍ່ໄປ
7:13 ການເຮັດຕາມປະເພນີຂອງພວກເຈົ້າແນວນີ້ກັບແນວອື່ນໆ ຊຶ່ງພວກເຈົ້າໄດ້
ນໍາໄປສອນ ພວກເຈົ້າຈັ່ງເຮັດໃຫ້ ພຣະຄໍາ ຂອງພຣະເຈົ້າຈືດຈາງໄປຈັ່ງບໍ່ໄດ້ເກີດ
ຜົນເລີຍ"
7:14 ແລ້ວບັດ ພຣະເຢຊູ ໄດ້ເອີ້ນຄົນທັງຫລາຍເຂົ້າມາ ໄດ້ບອກເຂົາວ່າ "ໃຫ້ພວກ
ເຈົ້າຄູ່ຄົນຟັງເຮົາ ຈັ່ງເຂົ້າໃຈໄວ້ເດີ້
7:15 ບໍ່ມີອີຫຍັງຢູ່ທາງນອກຜູ້ຄົນທັງຫລາຍ ທີ່ເຂົ້າໄປໃນໂຕເຂົາແລ້ວ ຊິສາມາດ
ເຮັດໃຫ້ເຂົາເປັນມົນທິນດອກ ມີແຕ່ແນວທີ່ອອກມາຈາກໃຈທີ່ສາມາດເຮັດໃຫ້ໂຕ
ເຂົາເປັນມົນທິນໄດ້
7:16 ຄັ່ນໃຜມີຫູກໍໃຫ້ຟັງເອົາເດີ້"
7:17 ແລ້ວບັດເພິ່ນຈາກພວກຄົນຢູ່ຫັ້ນ ເຂົ້າໄປໃນເຮືອນແລ້ວ ພວກລູກສິດໄດ້
ຖາມເພິ່ນເຖິງຄໍາປຽບທຽບນັ້ນ
7:18 ເພິ່ນຈັ່ງບອກເຂົາວ່າ "ພວກເຈົ້າຍັງຂາດຄວາມເຂົ້າໃຈຄືກັນກັບພວກເຂົາບໍ້
ຫລືຍັງນຶກບໍ່ເຫັນຄວາມຈິງ ຄືວ່າແນວໃດໆ ທີ່ຢູ່ພາຍນອກໂຕຄົນ ແລ້ວຈັ່ງເຂົ້າໄປ
ພາຍໃນ ແນວນັ້ນຊິເຮັດໃຫ້ຄົນເປັນມົນທິນມັນກໍເປັນໄປບໍ່ໄດ້ເລີຍ

7:19 ຍ້ອນວ່າແນວ *ກິນ* ນັ້ນບໍ່ໄດ້ເຂົ້າໄປໃນໃຈ ແຕ່ລົງໄປໃນທ້ອງຊື່ໆ ແລ້ວກໍຖ່າຍ
ອອກໄປ ຈັ່ງໄດ້ຊຳລະແນວກິນຄູ່ແນວໃຫ້ກ້ຽງ"
7:20 ແລ້ວເພິ່ນຈັ່ງບອກວ່າ "ແນວທີ່ອອກມາຈາກໃຈຂອງໂຕຄົນ ແນວນັ້ນເນາະໄດ້
ເຮັດໃຫ້ເຂົາເປັນມົນທິນ *(ເປັນບາບ)*
7:21 ຄືວ່າແນວທີ່ອອກຈາກພາຍໃນໃຈຂອງຄົນນັ້ນ ກໍມີແຕ່ແນວຄວາມຄຶດຊົ່ວ
ຮ້າຍ ຄືການຫລິ້ນຊູ້ ການຜິດຜົວຜິດເມຍກັນ ການຂ້າຟັນລັນແທງກັນ
7:22 ການລັກເອົາ ການໂລບ ຄວາມຊົ່ວ ການລໍ້ລວງ ຕັນຫາແຫ່ງເພດ ແວວຕາ
ມອງໃນທາງຊົ່ວ ການໝິ່ນປະມາດ ເຫຍື້ອຫຍິ່ງຈອງຫອງ ສາມັນສຳນຶກອັນໂງ່ບ້າ
7:23 ຄວາມຊົ່ວແນວໝູ່ນີ້ ເກີດມາຈາກພາຍໃນໃຈ ເປັນເຫດໃຫ້ຄົນເປັນມົນທິນ"
7:24 ເວົ້າແລ້ວ ເພິ່ນຈັ່ງລຸກຂຶ້ນຈາກໝ້ອງນັ້ນ ອອກໄປທາງເຂດແດນເມືອງ ຕີເຣ
ກັບເມືອງ ຊີໂດນ ແລ້ວເຂົ້າໄປໃນເຮືອນໝ້ອງໜຶ່ງ ບໍ່ຢາກໃຫ້ໃຜຮູ້ຈັກ ແຕ່ເພິ່ນ
ຫລົບຊ່ອນໂຕກໍບໍ່ໄດ້ເລີຍ
7:25 ຄືວ່າ ແມ່ຍິງຄົນໜຶ່ງຊຶ່ງມີລູກສາວທີ່ມີຜີໂສໂຄກເຂົ້າສິງ ບັດໄດ້ຍິນຂ່າວເລື່ອງ
ພຣະເຢຊູ ແມ່ຍິງນັ້ນກໍມາຂາບຕີນຂອງເພິ່ນ
7:26 ແມ່ຍິງນັ້ນເປັນຊາວເກຣັກ ຄືເປັນຄົນຊາດ ຊີເຣຍ ຟອຍນິເກ ນາງເລີຍວອນ
ຂໍກັບ ພຣະເຢຊູ ໃຫ້ເພິ່ນຂັບໄລ່ຜີອອກຈາກລູກສາວຂອງນາງ
7:27 ແຕ່ ພຣະເຢຊູ ບອກກັບນາງນັ້ນວ່າ "ໃຫ້ພວກລູກໆ ກິນອີ່ມຊະກ່ອນ ຄືມັນບໍ່ຄື
ທີ່ຊິເອົາອາຫານຂອງລູກໂຍນລົງໃຫ້ໝາກິນ"
7:28 ແຕ່ນາງຕອບເພິ່ນວ່າ "ແມ່ນຢູ່ ພຣະເຢຊູເຈົ້າ ຂ້າ ແຕ່ວ່າໝາທີ່ຢູ່ໃຕ້ໂຕະນັ້ນ
ໄດ້ກິນເສດອາຫານຂອງລູກໆ *ນາຍນັ້ນ* ບໍ່ແມ່ນບໍ້"
7:29 ແລ້ວ ພຣະເຢຊູ ບອກນາງວ່າ "ຍ້ອນນາງໄດ້ເວົ້າຖ້ອຍຄຳແນວນີ້ ກໍໃຫ້ກັບໄປ
ຊະເດີ້ ຜີອອກຈາກລູກສາວຂອງເຈົ້າແລ້ວ"
7:30 ແລ້ວພໍຍິງນັ້ນໄປຮອດເຮືອນເຈົ້າຂອງ ໄດ້ເຫັນວ່າຜີອອກຈາກລູກແລ້ວ ແລ້ວ
ລູກກໍນອນສະບາຍຢູ່ເທິງທີ່ນອນ
7:31 ຕໍ່ມາ ພຣະເຢຊູ ຈັ່ງອອກຈາກເຂດແດນເມືອງ ຕີເຣ ກັບເມືອງ ຊີໂດນ ຍ່າງ
ຕາມທາງພື້ນທີ່ແຄວ້ນກຸ່ມເມືອງ ສິບເມືອງ ມາຍັງທະເລ ກາລີເລ

7:32 ແລ້ວຄົນຢູ່ນັ້ນໄດ້ພາຜູ້ຊາຍຫູໜວກເວົ້າກະຕຸກກະຕັກຄົນໜຶ່ງມາຫາເພິ່ນ
ແລ້ວຈັ່ງວອນຂໍໃຫ້ເພິ່ນວາງມືເທິງຄົນນັ້ນ
7:33 ແລ້ວເພິ່ນຈັ່ງໄດ້ນຳເອົາຜູ້ຊາຍຜູ້ນັ້ນ ແຍກອອກຈາກຄົນຫລວງຫລາຍໄປຈັກ-
ໜ່ອຍ ແລ້ວຈັ່ງເອົານິ້ວມືສອດເຂົ້າຫູທັງສອງຂອງຜູ້ຊາຍຫູໜວກນັ້ນ ແລ້ວໄດ້ເອົາ
ນ້ຳລາຍໃສ່ນິ້ວມືເພິ່ນບາຍລີ້ນຄົນປາກກືກນັ້ນນຳ
7:34 ພໍເຮັດແລ້ວ ເພິ່ນເງີຍໜ້າຂຶ້ນເບິ່ງຟ້າສະຫວັນ ແລ້ວຈັ່ງລະບາຍລົມຫາຍໃຈ
ອອກ ເວົ້າກັບຜູ້ຊາຍຄົນນັ້ນວ່າ "ເອຟາທາ" ແປວ່າ "ໃຫ້ເປີດອອກຊະເດີ້"
7:35 ແລ້ວໃນຍາມນັ້ນພໍດີ ຫູຂອງຜູ້ຊາຍຄົນນັ້ນກໍເຊົາເປັນດີກັບໜ້ອງ ແນວຂັດ-
ຂ້ອງໃນລີ້ນຂອງເຂົາກໍໄດ້ຖືກປົດປ່ອຍອອກໄປ ແລ້ວເຂົາກໍເວົ້າໄດ້ຊັດເຈນດີ
7:36 ແລ້ວເພິ່ນໄດ້ສັ່ງຫ້າມພວກຄົນຢູ່ຫັ້ນວ່າ ບໍ່ໃຫ້ບອກເລື່ອງນີ້ຕໍ່ໃຜເດີ້ ແຕ່ເພິ່ນ
ແຮງຫ້າມຫລາຍຊໍາໃດ ພວກເຂົາກໍແຮງປ່າວປະກາດໄປທົ່ວ
7:37 ແລ້ວຄູ່ຄົນກໍແປກໃຈເປັນຕາງຶດຫລາຍຂະໜາດ ເວົ້າກັນວ່າ "ເພິ່ນໄດ້ເຮັດ
ໝົດຄູ່ແນວໃຫ້ດີເລີດ ໄດ້ເຮັດໃຫ້ຄົນຫູໜວກໄດ້ຍິນ ທັງເຮັດໃຫ້ຄົນປາກກືກເວົ້າ
ໄດ້"

## ມາຣະໂກ ບົດທີ 8

8:1 ໃນຍາມນັ້ນ ກໍມີຄົນຫລວງຫລາຍຂະໜາດ (ແລ້ວພວກເຂົານັ້ນກໍບໍ່ມີແນວກິນ)
ພຣະເຢຊູ ຈັ່ງໄດ້ເອີ້ນພວກລູກສິດຂອງເພິ່ນມາບອກເຂົາວ່າ
8:2 "ເຮົາອິຕົນຄົນຫລວງຫລາຍພວກນີ້ ຍ້ອນເຂົາຄ້າງຢູ່ກັບເຮົາໄດ້ສາມມື້ແລ້ວ
ແລ້ວພວກເຂົາກໍບໍ່ມີແນວຊິກິນເລີຍ
8:3 ຄັ່ນເຮົາຊິໃຫ້ເຂົາກັບເມືອບ້ານໂດຍຍັງບໍ່ໄດ້ກິນເຂົ້າ ເຂົາຊິຫິວໂຫຍໝົດແຮງ
ຕາມທາງ ຍ້ອນວ່າຜູ້ລາງຄົນເດີນທາງມາແຕ່ໄກ"
8:4 ແລ້ວພວກລູກສິດຂອງເພິ່ນຈັ່ງຕອບເພິ່ນວ່າ "ໃນຖິ່ນແຫ້ງແລ້ງນີ້ຊິຫາເອົາ
ແນວກິນມາແຕ່ໃສ ໃຫ້ຄົນພວກນີ້ກິນໃຫ້ມັນອີ່ມໄດ້"
8:5 ແລ້ວເພິ່ນຈັ່ງຖາມພວກເຂົາວ່າ "ພວກເຈົ້າມີເຂົ້າຈີ່ຈັກກ້ອນ" ເຂົາເວົ້າວ່າ "ມີຢູ່
ເຈັດກ້ອນ"

8:6 ແລ້ວ ພຣະເຢຊູ ຈັ່ງສັ່ງພວກປະຊາຊົນຢູ່ຫັ້ນໃຫ້ນັ່ງລົງພື້ນດິນ ແລ້ວເພິ່ນໄດ້ຮັບ
ເອົາເຂົ້າຈີ່ເຈັດກ້ອນນັ້ນ ແລ້ວຂອບຄຸນ ແລ້ວຈັ່ງບິໃຫ້ພວກລູກສິດແຈກອອກໄປ
ໃຫ້ພວກຄົນທັງຫລາຍຢູ່ຫັ້ນ
8:7 ແລ້ວພວກເຂົາກໍມີປາໂຕນ້ອຍໆ ຢູ່ບໍ່ຫລາຍ ພຣະເຢຊູ ຈັ່ງຂອບຄຸນ ແລ້ວບອກ
ໃຫ້ເອົາປານັ້ນແຈກອອກໄປນຳ
8:8 ຈັ່ງຊັ້ນ ໝົດຄູ່ຄົນໄດ້ກິນອິ່ມໜຳແລ້ວ ສ່ວນທີ່ເຫລືອຫັ້ນເຂົາເກັບໄດ້ເຈັດກະບຸງ
8:9 ແລ້ວຄົນທີ່ກິນກໍມີປະມານ 4,000 ຄົນ ໄດ້ກິນແລ້ວເພິ່ນໄດ້ສົ່ງພວກເຂົາທັງ-
ຫລາຍອອກໄປ
8:10 ແລ້ວໃນຫວ່າງນັ້ນ ພຣະເຢຊູ ໄດ້ລົງເຮືອຮ່ວມກັນກັບພວກລູກສິດຂອງເພິ່ນ
ໄປເຂົ້າເຂດເມືອງ ດານມານຸທາ
8:11 ບັດນີ້ ພວກ ຟາຣີຊາຍ ອອກມາ ແລ້ວຕັ້ງຕົ້ນເລີ່ມໂຕ້ຖຽງກັບ ພຣະເຢຊູ ຢາກ
ໃຫ້ເພິ່ນສະແດງເຄື່ອງໝາຍສຳຄັນຈາກຟ້າສະຫວັນ ເພື່ອຊິທົດລອງເພິ່ນ
8:12 ແລ້ວເພິ່ນໄດ້ຫັນໃຈຍາວເລິກໆ ຈາກໃຈ ແລ້ວເວົ້າວ່າ “ຄົນຍຸກນີ້ສະແຫວງຫາ
ເຄື່ອງໝາຍສຳຄັນຍ້ອນຫຍັງ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ຊິບໍ່ມີເຄື່ອງໝ
າຍສຳຄັນທີ່ຊິໃຫ້ຄົນຍຸກນີ້ດອກ”
8:13 ແລ້ວເພິ່ນໄດ້ໄປຈາກພວກເຂົາ ລົງເຮືອຂ້າມຟາກໄປອີກ
8:14 ຝ່າຍພວກລູກສິດກໍລືມເອົາເຂົ້າຈີ່ໄປ ແລ້ວໃນເຮືອນັ້ນເຂົາກໍບໍ່ມີ ມີແຕ່ເຂົ້າຈີ່ຢູ່
ກ້ອນດຽວເທົ່ານັ້ນ
8:15 ແລ້ວ ພຣະເຢຊູ ບອກພວກລູກສິດໄວ້ວ່າ “ນີ້ແຫລະ ຄອຍຖ້າເບິ່ງເອົາ ໃຫ້ລະ-
ວັງເຊື້ອຟູ *ອັນຊົ່ວ* ຂອງພວກ ຟາຣີຊາຍ ກັບເຊື້ອຟູ *ອັນຊົ່ວ* ຂອງ ເຮໂຣດ ໃຫ້ດີ
ເດີ້”
8:16 ແລ້ວພວກລູກສິດຈັ່ງປຶກສາກັນວ່າ “ແມ່ນຍ້ອນເຫດທີ່ເຮົາບໍ່ມີເຂົ້າຈີ່ບໍ້ *ທີ່ເພິ່ນ
ເວົ້າແນວນີ້*”
8:17 ແລ້ວບັດ ພຣະເຢຊູ ຮູ້ທັນ ເພິ່ນຈັ່ງເວົ້າກັບເຂົາວ່າ “ເປັນຫຍັງພວກເຈົ້າຈັ່ງ
ປຶກສາຫາລືກັນເຖິງເລື່ອງບໍ່ມີເຂົ້າຈີ່ ພວກເຈົ້າຍັງບໍ່ຮູ້ເມື່ອບໍ້ ກັບຍັງບໍ່ເຂົ້າໃຈບໍ້ ຄື
ໃຈຂອງພວກເຈົ້າຍັງອຸດຕັນຢູ່ບໍ້

8:18 ມີຕາແລ້ວຍັງບໍ່ເຫັນບໍ້ ມີຫູແລ້ວຍັງບໍ່ໄດ້ຍິນບໍ້ ພວກເຈົ້າຈື່ບໍ່ໄດ້ບໍ້
8:19 ຕອນເຮົາບິເຂົ້າຈີ່ຫ້າກ້ອນໃຫ້ຄົນ 5,000 ຄົນນັ້ນ ພວກເຈົ້າໄດ້ເກັບແນວທີ່
ເຫລືອຫັ້ນໄດ້ຈັກກະບຸງ" ເຂົາຕອບເພິ່ນວ່າ "ໄດ້ 12 ກະບຸງພໍດີ"
8:20 "ແລ້ວບັດໄດ້ແຈກເຂົ້າຈີ່ເຈັດກ້ອນໃຫ້ຄົນ 4,000 ຄົນນັ້ນ ພວກເຈົ້າເກັບແນວ
ທີ່ເຫລືອຫັ້ນໄດ້ຈັກກະບຸງ" ເຂົາຕອບວ່າ "ໄດ້ 7 ກະບຸງ"
8:21 ແລ້ວເພິ່ນຈັ່ງເວົ້າກັບເຂົາວ່າ "ແລ້ວເປັນຫຍັງພວກເຈົ້າຍັງບໍ່ທັນເຂົ້າໃຈ"
8:22 ເວົ້າແລ້ວ ພຣະເຢຊູ ກໍໄປຍັງເມືອງ ເບດໄຊດາ ແລ້ວໄທເມືອງນັ້ນໄດ້ຈູງເອົາ
ຜູ້ຊາຍຕາບອດຄົນໜຶ່ງມາຫາ ຂໍໃຫ້ເພິ່ນເອົາມືໃສ່ຜູ້ຊາຍຕາບອດນັ້ນ
8:23 ເພິ່ນຈັ່ງໄດ້ຈູງມືຄົນຕາບອດ ນໍາອອກໄປນອກເມືອງ ບັດໄດ້ເອົານໍ້າລາຍລົງ
ໃສ່ຕາຄົນນັ້ນ ກັບວາງມືເທິງເຂົາແລ້ວ ເພິ່ນຈັ່ງຖາມຜູ້ຊາຍນັ້ນວ່າ ເຈົ້າເຫັນຮຸ່ງ
ຫລືບໍ້
8:24 ຄົນນັ້ນເງີຍໜ້າຂຶ້ນແລ້ວເວົ້າວ່າ "ຜູ້ຂ້າເຫັນຄົນຄືກົກໄມ້ຍ່າງໄປຍ່າງມາ"
8:25 ແລ້ວ ພຣະເຢຊູ ຈັ່ງວາງມືເທິງຕາເຂົາອີກ ແລ້ວໃຫ້ເຂົາເງີຍໜ້າຂຶ້ນ ບັດນີ້ຕາ
ຂອງຜູ້ຊາຍນັ້ນກໍເຊົາເປັນດີ ເຫັນຄູ່ຄົນໄດ້ຊັດເຈນ
8:26 ແລ້ວເພິ່ນຈັ່ງສົ່ງເຂົາໃຫ້ເມືອເຮືອນຂອງເຂົາ ບໍ່ໃຫ້ແວະໃສ ບອກວ່າ "ຢ່າເຂົ້າ-
ໄປໃນເມືອງ ຫລືເວົ້າໃຫ້ໃຜໃນເມືອງນັ້ນຟັງເລີຍ"
8:27 ແລ້ວ ພຣະເຢຊູ ໄດ້ອອກໄປກັບພວກລູກສິດຂອງເພິ່ນ ເຂົ້າເມືອງຕ່າງໆ ໃນ
ກາຍຊາເຣຍ ກັບ ຟີລິບປອຍ ແລ້ວບັດເພິ່ນພວມຍ່າງຕາມທາງຢູ່ຫັ້ນ ເພິ່ນເລີຍ
ຖາມພວກລູກສິດວ່າ "ຜູ້ຄົນເວົ້າກັນວ່າເຮົາເປັນໃຜ"
8:28 ແລ້ວເຂົາຕອບວ່າ "ຜູ້ລາງຄົນວ່າເປັນ ໂຢຮັນ ຜູ້ໃຫ້ຮັບພິທີຈຸ່ມນໍ້າ ແຕ່ຜູ້ລາງ
ຄົນວ່າຜູ້ເປັນປາກເປັນສຽງ ເອລີຢາ ແລ້ວຄົນອື່ນກໍຍັງວ່າຜູ້ເປັນປາກເປັນສຽງອີກ
ຄົນໜຶ່ງ"
8:29 ແລ້ວເພິ່ນຈັ່ງຖາມເຂົາວ່າ "ຝ່າຍພວກເຈົ້າເດ໋ ວ່າເຮົາເປັນຜູ້ໃດ" ເປໂຕ ເລີຍ
ຕອບເພິ່ນວ່າ "ທ່ານເປັນ ພຣະຄຣິດ ນັ້ນເນາະ"
8:30 ແລ້ວ ພຣະເຢຊູ ສັ່ງຫ້າມພວກລູກສິດໄວ້ ບໍ່ໃຫ້ບອກຜູ້ໃດວ່າເພິ່ນເປັນໃຜ

8:31 ແລ້ວເພິ່ນຈັ່ງໄດ້ຕັ້ງຕົ້ນເລີ່ມສອນລູກສິດວ່າ “ເຮົາຜູ້ເປັນບຸດມະນຸດຈຳເປັນຊິ
ຕ້ອງທົນທຸກທໍລະມານຫລາຍແນວ ແລ້ວພວກຜູ້ຫລັກຜູ້ໃຫຍ່ ພວກຫົວໜ້າປະ-
ໂລຫິດ ກັບພວກນັກທຳກໍາຊິປະຕິເສດບໍ່ຍອມຮັບໃນໂຕເຮົາ ແລ້ວເຮົາຊິຕ້ອງຖືກ
ປະຫານຊີວິດ ແຕ່ໃນມື້ທີ່ສາມເຮົາຊິໄດ້ເປັນຂຶ້ນມາຈາກຕາຍ”
8:32 ແລ້ວ ພຣະເຢຊູ ໄດ້ເວົ້າຄຳແນວໝູ່ນີ້ຢ່າງແຈ່ມແຈ້ງ ພໍຟັງແລ້ວ ເປໂຕ ຈັ່ງນຳ
ເພິ່ນອອກໄປຈັກໜ່ອຍ ແລ້ວໄດ້ເລີ່ມສັ່ງຫ້າມເພິ່ນໄວ້
8:33 ແຕ່ພໍ ພຣະເຢຊູ ໄດ້ຫລຽວເບິ່ງພວກລູກສິດຂອງເພິ່ນແລ້ວ ກໍໄດ້ຕິຕຽນ ເປໂຕ
ວ່າ “ອ້າຍຜີພະຍາມານຊາຕານ ໃຫ້ຖອຍອອກໄປຂ້າງຫລັງເຮົາແມ່ະ ຍ້ອນແນວ
ຄວາມຄຶດຂອງເຈົ້າບໍ່ໄດ້ຕາມພຣະປະສົງຂອງພຣະເຈົ້າເລີຍ ແຕ່ເປັນແນວຄວາມ
ຄຶດຕາມຄ່ານິຍົມຂອງຄົນຊື່ໆ”
8:34 ແລ້ວບັດເພິ່ນໄດ້ເອີ້ນເອົາພວກປະຊາຊົນຢູ່ຫັ້ນມາຫາ ຮ່ວມກັນທັງພວກລູກ-
ສິດຂອງເພິ່ນ ເພິ່ນຈັ່ງເວົ້າກັບເຂົາທັງຫລາຍວ່າ “ຄັ່ນຜູ້ໃດຢາກຕາມເຮົາມາ ກໍໃຫ້
ຜູ້ນັ້ນປະຕິເສດຄວາມປາດຖະໜາຂອງໂຕເອງ ແລ້ວຮັບແບກເອົາໄມ້ກາງແຂນ
ຂອງໂຕ ແລ້ວຈັ່ງຕາມເຮົາມາ
8:35 ຄືວ່າ ຜູ້ໃດຄຶດຢາກເອົາຊີວິດລອດ ຊີວິດຂອງຜູ້ນັ້ນຊິໄປບໍ່ລອດ ແຕ່ຜູ້ໃດທີ່ອຸ-
ທິດຊີວິດຂອງໂຕຍ້ອນເຫັນແກ່ເຮົາ ຜູ້ນັ້ນກໍຊິໄດ້ຊີວິດລອດ
8:36 ຄືຄັ່ນຜູ້ໃດຊິໄດ້ສິ່ງຂອງໝົດທັງໂລກ ແຕ່ໃນທີ່ສຸດຈິດວິນຍານຂອງໂຕເອງຊິ
ຕ້ອງພິນາດໄປ ມັນຊິເປັນປະໂຫຍດອີຫຍັງຕໍ່ເຂົາ
8:37 ຫລືວ່າ ຜູ້ໃດຊິເອົາອີຫຍັງມາແລກເອົາເພື່ອຈິດວິນຍານຂອງໂຕ
8:38 ຈັ່ງຊັ້ນ ຄັ່ນຜູ້ໃດກໍຕາມທີ່ມີຄວາມລະອາຍໃນເຮົາກັບໃນຖ້ອຍຄຳຂອງເຮົາຕໍ່
ໜ້າຄົນໃນຍຸກຫລິ້ນຊູ້ຄູ່ແນວນີ້ ຊຶ່ງເຕັມໄປດ້ວຍບາບ ບັດຍາມທີ່ເຮົາຜູ້ເປັນບຸດ
ມະນຸດລົງມາປະກອບດ້ວຍສະຫງ່າລາສີຂອງພຣະເຈົ້າຜູ້ເປັນພໍ່ ພ້ອມໝູ່ເທວະ-
ທູດອັນບໍລິສຸດຂອງເພິ່ນ ໃນຕອນນັ້ນເຮົາກໍຊິເສຍໃຈໃນຜູ້ນັ້ນຍ້ອນເຂົາມີຄວາມ
ລະອາຍໃນເຮົາ”

# ມາຣະໂກ ບົດທີ 9

9:1 ແລ້ວເພິ່ນບອກເຂົາອີກວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ໃນໝູ່ພວກ
ເຈົ້າທີ່ຢືນຢູ່ນີ້ ມີຜູ້ລາງຄົນຊິບໍ່ໄດ້ຊີມລົດຊາດຂອງຄວາມຕາຍຈົນກວ່າຊິໄດ້ເຫັນ
ລາຊະອານາຈັກຂອງພຣະເຈົ້າລົງມາອັນປະກອບດ້ວຍລິດທານຸພາບ”
9:2 ແລ້ວຢູ່ມາອີກຫົກມື້ ພຣະເຢຊູ ໄດ້ຊວນ ເປໂຕ ຢາໂກໂບ ກັບ ໂຢຮັນ ຂຶ້ນໄປ
ຢູ່ບໍລິເວນເປົ່າປ່ຽວເທິງພູເຂົາສູງໆ ພໍຮອດແລ້ວ ລັກສະນະພາບຂອງເພິ່ນໄດ້
ປ່ຽນໄປຕໍ່ໜ້າຕໍ່ຕາພວກເຂົາ
9:3 ແລ້ວເສື້ອຄຸມຍາວຂອງເພິ່ນ ເລີ່ມຊິອອກແສງເຫລື້ອມໆ ຂາວຈົວະຄືຫິມະ
ຂາວກວ່າຊ່າງຟອກຜ້າທົ່ວໂລກສາມາດຊິເຮັດໄດ້
9:4 ແລ້ວພໍດີ ເອລີຢາ ກັບ ໂມເຊ ໄດ້ປາກົດໃຫ້ພວກລູກສິດເຫັນ ພວມຊຸມກັນກັບ
ພຣະເຢຊູ
9:5 ຝ່າຍ ເປໂຕ ສະເໜີກັບ ພຣະເຢຊູ ເວົ້າວ່າ “ອາຈານເຈົ້າຂ້າ ຊຶ່ງພວກຜູ້ຂ້າຢູ່ນຳ
ອາຈານຢູ່ພີ້ກໍຖືວ່າເປັນໂອກາດດີຫລາຍ ໃຫ້ພວກຜູ້ຂ້າເຮັດຕູບສາມຫລັງໄວ້ ໃຫ້
ທ່ານຫລັງໜຶ່ງ ໃຫ້ ໂມເຊ ຫລັງໜຶ່ງ ແລ້ວໃຫ້ ເອລີຢາ ອີກຫລັງໜຶ່ງ”
9:6 ທີ່ ເປໂຕ ເວົ້າຈັ່ງຊີ້ກໍຍ້ອນ ລາວ ບໍ່ຈັກຄວາມເວົ້າ ຄືພວກເຂົາຢ້ານຂະໜາດ
9:7 ແລ້ວມີເມກມາປົກຄຸມເຂົາໄວ້ ກັບມີສຽງຂອງຜູ້ມີອຳນາດອອກມາຈາກເມກວ່າ
“ທ່ານຜູ້ນີ້ເປັນລູກ *ໂທນ* ທີ່ຮັກຂອງເຮົາ ໃຫ້ຟັງເພິ່ນເດີ້”
9:8 ແລ້ວໃນຫວ່າງນັ້ນພໍດີ ບັດລູກສິດຫລຽວເບິ່ງອ້ອມຮອບ ກໍບໍ່ເຫັນໃຜ ເຫັນແຕ່
ພຣະເຢຊູ ຢູ່ນຳເຂົາເທົ່ານັ້ນ
9:9 ແລ້ວບັດພວມລົງມາຈາກພູເຂົາ ເພິ່ນໄດ້ສັ່ງຫ້າມພວກລູກສິດສາມຄົນນັ້ນໄວ້
ບໍ່ໃຫ້ນຳເອົາຄວາມໃດໆ ທີ່ໄດ້ເຫັນຢູ່ຫັ້ນໄປບອກຜູ້ໃດເລີຍ ຈົນກວ່າຜູ້ເປັນບຸດ
ມະນຸດຊິເປັນຂຶ້ນມາຈາກຕາຍ
9:10 ແລ້ວພວກລູກສິດກໍຖືຮັກສາແນວທີ່ເປັນໄປຫັ້ນໄວ້ ຊັກຖາມກັນວ່າ ການເປັນ
ຂຶ້ນມາຈາກຕາຍນັ້ນ ຊິໝາຍຄວາມວ່າຈັ່ງໃດ
9:11 ແລ້ວເຂົາຈັ່ງຖາມ ພຣະເຢຊູ ວ່າ “ເປັນຫຍັງພວກນັກທຳນັ້ນໄດ້ເວົ້າກັນວ່າ
ເອລີຢາ ຊິຕ້ອງມາກ່ອນ”

9:12 ພຣະເຢຊູ ຕອບເຂົາວ່າ “ ເອລີຢາ ຕ້ອງມາກ່ອນກໍແມ່ນຢູ່ ເພື່ອຊິເຮັດໃຫ້ໝົດ-
ຄູ່ແນວຄືນສະພາບເດີມ ແລ້ວຕາມມີຄຳຂຽນໄວ້ເຖິງເຮົາຜູ້ເປັນບຸດມະນຸດນັ້ນວ່າ
ເພິ່ນຈຳເປັນຈັ່ງຕ້ອງທົນທຸກທໍລະມານຫລາຍອັນຫລາຍແນວ ກັບຊິໂດນຄົນທັງ-
ຫລາຍດູໝິ່ນເພິ່ນ
9:13 ແຕ່ເຮົາຊິບອກພວກເຈົ້າວ່າ ເອລີຢາ ນັ້ນໄດ້ມາແລ້ວ ແລ້ວພວກເຂົາໄດ້ເຮັດ
ໃສ່ ລາວ ຕາມແນວທີ່ເຂົາຢາກຊິເຮັດ ຕາມທີ່ມີຄຳຂຽນໄວ້ເຖິງ ລາວ ”
9:14 ແລ້ວບັດພໍ ພຣະເຢຊູ ມາຫາພວກລູກສິດເພິ່ນ ເພິ່ນກໍຫລຽວເບິ່ງເຫັນຄົນ
ຫລວງຫລາຍຂະໜາດ ພ້ອມພວກນັກທຳຢູ່ອ້ອມພວກລູກສິດເພິ່ນ ພວມຊັກຖາມ
ລູກສິດຢູ່ຫັ້ນ
9:15 ໃນຍາມນັ້ນພໍດີ ບັດພວກຄົນທັງຫລາຍຢູ່ຫັ້ນເຫັນ ພຣະເຢຊູ ເຂົາກໍດີໃຈ
ຫລາຍ ຈັ່ງແລ່ນເຂົ້າມາຕ້ອນຮັບເຄົາລົບເພິ່ນ
9:16 ແລ້ວເພິ່ນຈັ່ງຖາມພວກນັກທຳນັ້ນວ່າ “ເຈົ້າຊັກຖາມພວກເຂົາເລື່ອງຫຍັງ”
9:17 ແລ້ວໃນຫວ່າງນັ້ນມີຄົນໜຶ່ງໃນພວກຄົນຫລວງຫລາຍຢູ່ຫັ້ນຕອບຂຶ້ນມາວ່າ
“ອາຈານເຈົ້າຂ້າ ຜູ້ຂ້າໄດ້ພາລູກຊາຍຂອງຜູ້ຂ້າມາຫາທ່ານຍ້ອນຜີໃບ້ເຂົ້າສິງ
9:18 ແລ້ວຜີນັ້ນພາລູກຜູ້ຂ້າໄປໜ້ອງໃດ ມັນກໍເຮັດໃຫ້ລົ້ມຊັກດີ້ນຢູ່ຫັ້ນ ມີ ອາການ
ນ້ຳລາຍຟູມປາກກັບກັດແຂ້ວ ແລ້ວໂຕເຂົາກໍຫ່ຽວແຫ້ງລົງໄປນຳ ຜູ້ຂ້າໄດ້ຂໍພວກ
ລູກສິດຂອງທ່ານໃຫ້ຂັບຜີນັ້ນອອກ ແຕ່ເຂົາເຮັດບໍ່ໄດ້ເລີຍ”
9:19 ພຣະເຢຊູ ຈັ່ງຕອບຄົນນັ້ນວ່າ “ໂອ້ ພວກຄົນຍຸກທີ່ຂາດຄວາມເຊື່ອວາງໃຈແທ້
ເນາະ ເຮົາຊິຕ້ອງທົນເອົາຢູ່ນຳພວກເຈົ້າໂດນຊ່ຳໃດເຮີຍ ໃຫ້ພາເດັກນັ້ນມາຫາ
ເຮົາເດີ້”
9:20 ແລ້ວເຂົາໄດ້ພາເດັກນັ້ນມາຫາ ພຣະເຢຊູ ແລ້ວບັດພໍເຫັນເພິ່ນ ຜີຈັ່ງເຮັດໃຫ້
ເດັກຊັກດີ້ນລົ້ມລົງດິນ ກັບມີນ້ຳລາຍຟູມປາກ ກິ້ງໄປກິ້ງມາຢູ່ຫັ້ນ
9:21 ພຣະເຢຊູ ຈັ່ງຖາມພໍ່ເດັກນັ້ນວ່າ “ເປັນແນວນີ້ ມາໂດນ ປານໃດ” ພໍ່ເດັກຕອບ
ວ່າ “ຄືເປັນມາແຕ່ນ້ອຍ
9:22 ແລ້ວຫລາຍເທື່ອ ຜີຊິໂຍນລົງໃນໄຟ ກັບໂຍນລົງໃນນ້ຳ ຍ້ອນຢາກຊິເຮັດຮ້າຍ
ເຂົາ ແຕ່ຄັ່ນທ່ານຜູ້ຂ້າສາມາດເຮັດໄດ້ ຂໍໂຜດຊ່ອຍເມດຕາພວກຜູ້ຂ້າທ້ອນ”

9:23 ພຣະເຢຊູ ເລີຍບອກພໍ່ນັ້ນວ່າ “ຄັນເຈົ້າເຊື່ອວາງໃຈໄດ້ ໝົດຄູ່ແນວເປັນໄປ
ໄດ້ສໍາລັບຜູ້ທີ່ເຊື່ອ”
9:24 ຫວ່າງນັ້ນພໍດີ ພໍ່ຂອງເດັກນັ້ນກໍຮ້ອງຂໍດ້ວຍນໍ້າຕາໄຫລວ່າ “ທ່ານເຈົ້າຂ້າ ຜູ້-
ຂ້າເຊື່ອວາງໃຈຢູ່ແລ້ວ ຂໍຊ່ອຍຄວາມບໍ່ເຊື່ອຂອງຜູ້ຂ້າແໜ່ທ້ອນ”
9:25 ບັດ ພຣະເຢຊູ ຫລຽວເບິ່ງ ໄດ້ເຫັນພວກປະຊາຊົນຢູ່ຫັ້ນພວມແລ່ນເຂົ້າມາ
ເພິ່ນຈັ່ງສັ່ງຜີໄສໂຄກນັ້ນວ່າ “ອ້າຍຜີໃບ້ຫູໜວກ ເຮົາສັ່ງມຶງໃຫ້ອອກມາຈາກເຂົາ
ທັນທີເດີ້ ແລ້ວຢ່າສູ່ກັບເຂົ້າສິງເຂົາອີກຈັກເທື່ອເລີຍ”
9:26 ຜີນັ້ນຮ້ອງສຽງດັ່ງ ແລ້ວເຮັດໃຫ້ເດັກນັ້ນຊັກດີ້ນຫລາຍຂະໜາດ ແລ້ວຈັ່ງອອກ
ມາ ເດັກນັ້ນກໍນອນນິ່ງຄືຄົນຕາຍ ຈົນມີຫລາຍຄົນກ່າວວ່າ “ຕາຍແລ້ວໆ”
9:27 ແຕ່ ພຣະເຢຊູ ໄດ້ຈັບມືຊ່ວຍເຫລືອເດັກນັ້ນ ແລ້ວເດັກກໍຢືນຂຶ້ນ
9:28 ແລ້ວບັດເພິ່ນເຂົ້າເຮືອນນັ້ນແລ້ວ ພວກລູກສິດຂອງເພິ່ນຈັ່ງຖາມເພິ່ນເປັນ
ສ່ວນໂຕວ່າ “ເປັນຫຍັງພວກຜູ້ຂ້າຈັ່ງບໍ່ສາມາດຂັບຜີນັ້ນອອກໃຫ້ໄດ້”
9:29 ແລ້ວເພິ່ນຕອບເຂົາວ່າ “ຜີແນວນີ້ຊິອອກບໍ່ໄດ້ເລີຍ ນອກຈາກໂດຍການອະ-
ທິຖານເວົ້ານໍາພຣະເຈົ້າ ກັບຖືການອົດອາຫານນໍາ”
9:30 ແລ້ວ ພຣະເຢຊູ ກັບພວກລູກສິດໄດ້ອອກຈາກໜ້ອງນັ້ນ ຍ່າງຜ່ານແຄວັນ ກາ-
ລີເລ ໄປ ແຕ່ເພິ່ນບໍ່ຢາກໃຫ້ຜູ້ໃດຮູ້ເຖິງເລື່ອງ *ຂັບຜີ* ແນວທີ່ເປັນໄປຫັ້ນ
9:31 ຄືເພິ່ນເຄີຍບອກສອນລູກສິດຂອງເພິ່ນວ່າ “ເຮົາຜູ້ເປັນບຸດມະນຸດຊິຕ້ອງຖືກ
ມອບໄວ້ໃນມືຂອງຜູ້ຄົນທັງຫລາຍ ແລ້ວພວກເຂົາຊິປະຫານເພິ່ນ ພໍບັດປະຫານ
ແລ້ວ ເພິ່ນຊິເປັນຂຶ້ນມາຈາກຕາຍໃນມື້ທີ່ສາມ”
9:32 ແຕ່ພວກລູກສິດບໍ່ເຂົ້າໃຈຖ້ອຍຄໍານີ້ ບັດຄຶດຢາກຊິຖາມເພິ່ນກໍເກງໃຈ
9:33 ແລ້ວ ພຣະເຢຊູ ໄປເມືອງ ກາເປນາອູມ ພໍເຂົ້າໄປໃນເຮືອນແລ້ວ ເພິ່ນເລີຍ
ຖາມພວກລູກສິດວ່າ “ຕອນມາຕາມທາງນັ້ນ ພວກເຈົ້າໄດ້ໂຕ້ແຍ້ງກັນເລື່ອງ
ຫຍັງ”
9:34 ພວກລູກສິດກໍມິດຢູ່ ຍ້ອນຕອນມາຕາມທາງນັ້ນເຂົາໄດ້ຖຽງກັນວ່າ ໃຜຊິເປັນ
ໃຫຍ່ກວ່າກັນ

9:35 ເພິ່ນເລີຍນັ່ງລົງ ແລ້ວເອີ້ນລູກສິດສິບສອງຄົນນັ້ນມາ ເວົ້າກັບເຂົາວ່າ "ຄັນຜູ້-
ໃດຢາກເປັນໃຫຍ່ເປັນໂຕ ຜູ້ນັ້ນຊິເປັນຜູ້ນ້ອຍໆ ກັບຊິເປັນຄົນໃຊ້ຂອງໝົດຄູ່ຄົນ
ນຳ"
9:36 ແລ້ວເພິ່ນໄດ້ນຳເອົາເດັກນ້ອຍຄົນໜຶ່ງໃຫ້ມາຢືນຢູ່ຫວ່າງກາງໝູ່ພວກລູກສິດ
ແລ້ວເພິ່ນອຸ້ມເດັກນັ້ນໄວ້ ເວົ້າກັບພວກລູກສິດວ່າ
9:37 "ແມ່ນຜູ້ໃດກໍຕາມ ທີ່ຊິຕ້ອນຮັບເອົາເດັກນ້ອຍຄືເດັກຜູ້ນີ້ ໃນນາມຂອງເຮົາ ກໍ
ທໍ່ກັບໄດ້ຕ້ອນຮັບເຮົາ ແລ້ວຜູ້ໃດທີ່ໄດ້ຕ້ອນຮັບເຮົາ ກໍບໍ່ໄດ້ຕ້ອນຮັບເຮົາແຕ່ຜູ້
ດຽວຊື່ໆ ແຕ່ໄດ້ຕ້ອນຮັບຜູ້ທີ່ໃຊ້ເຮົາມາພ້ອມນຳ"
9:38 ແລ້ວ ໂຢຮັນ ຈັ່ງເວົ້າກັບເພິ່ນ ວ່າ "ອາຈານເຈົ້າຂ້າ ພວກຜູ້ຂ້າໄດ້ເຫັນຄົນໜຶ່ງ
ຂັບໄລ່ຜີອອກໂດຍໃນພຣະນາມຂອງທ່ານ ຊຶ່ງຄົນນັ້ນບໍ່ໄດ້ຕິດຕາມໝູ່ພວກເຮົາ
ພວກຜູ້ຂ້າເລີຍຫ້າມເຂົາ *ບໍ່ໃຫ້ເຮັດ* ຍ້ອນເຂົາບໍ່ໄດ້ຕິດຕາມໝູ່ພວກເຮົາ"
9:39 ແຕ່ ພຣະເຢຊູ ບອກວ່າ "ຢ່າສູ່ຫ້າມເຂົາເລີຍ ຄືບໍ່ມີໃຜຊິເຮັດການອັດສະຈັນ
ໃນນາມຂອງເຮົາ ແລ້ວຫັນກັບມາເວົ້າໃສ່ຮ້າຍເຮົາດອກ
9:40 ຄືວ່າຜູ້ໃດທີ່ບໍ່ໄດ້ຕໍ່ຕ້ານເຮົາ ຜູ້ນັ້ນກໍຢູ່ຝ່າຍເຮົາ
9:41 ຄືວ່າ ຜູ້ໃດກໍຕາມທີ່ຊິເອົານ້ຳໃຫ້ເຈົ້າກິນໃນນາມຂອງເຮົາ ຍ້ອນວ່າເຈົ້າເປັນ
ຄົນຂອງເຮົາ *ຜູ້ເປັນ* ພຣະຄຣິດ ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ຜູ້ນັ້ນຊິບໍ່
ໄດ້ຂາດບຳເໜັດເລີຍ
9:42 ແລ້ວຜູ້ໃດກໍຕາມທີ່ຊິເຮັດໃຫ້ຜູ້ນ້ອຍໆແນວໝູ່ນີ້ທີ່ເຊື່ອໃນເຮົາສະດຸດຫລົງ-
ທາງໄປ ຄັນຊິເອົາຫີນໂມ້ຜູກແຂວນຄໍຜູ້ນັ້ນໄວ້ ແລ້ວຖິ້ມຖ່ວງລົງໃນທະເລ ກໍຊິ
ເບົາກວ່າ *ໂທດທີ່ເຂົາຊິຕ້ອງຖືກນັ້ນ*
9:43 ແລ້ວຄັນມືຂອງເຈົ້າພາເຈົ້າຫລົງຜິດໄປ ໃຫ້ຕັດມັນຖິ້ມຊະເດີ້ ຄືການເຂົ້າສູ່ຊີ-
ວິດດ້ວຍມືດ້ວນກໍຍັງດີກວ່າມີມືສອງຂ້າງ ແລ້ວຕົກລົງໃນບຶງໄຟນະລົກ ເປັນໜ້ອງ
ທີ່ໄຟບໍ່ຮູ້ຈັກມອດ
9:44 ເປັນໜ້ອງທີ່ໂຕໜອນຂອງເຂົາບໍ່ຕາຍ ແລ້ວໄຟບໍ່ຮູ້ຈັກມອດເລີຍ

9:45 ແລ້ວຄັນວ່າ ຕີນຂອງເຈົ້າພາເຈົ້າຫລົງຜິດ ໃຫ້ຕັດມັນຖິ້ມຊະເດີ້ ຄືການເຂົ້າສູ່
ຊີວິດດ້ວຍຕີນດ້ວນ ກໍຍັງດີກວ່າມີຕີນສອງຂ້າງ ແລ້ວຖືກຖິ້ມລົງໃນບຶງໄຟນະລົກ
ຄືເຂົ້າໃນໄຟທີ່ບໍ່ຮູ້ຈັກມອດ
9:46 ເປັນໜ້ອງທີ່ໂຕໜອນຂອງເຂົາບໍ່ຕາຍ ແລ້ວໄຟບໍ່ຮູ້ຈັກມອດເລີຍ
9:47 ແລ້ວຄັນຕາຂອງເຈົ້າພາເຈົ້າຫລົງຜິດ ໃຫ້ຄວັກອອກຖິ້ມຊະເດີ້ ຄືການເຂົ້າໃນ
ລາຊະອານາຈັກຂອງພຣະເຈົ້າດ້ວຍຕາຂ້າງດຽວ ກໍຍັງດີກວ່າມີຕາສອງໜ່ວຍ
ແລ້ວຈັ່ງຖືກຖິ້ມລົງໃນບຶງໄຟນະລົກ
9:48 ເປັນໜ້ອງທີ່ໂຕໜອນຂອງເຂົາບໍ່ຕາຍ ແລ້ວໄຟບໍ່ຮູ້ຈັກມອດເລີຍ
9:49 ຄືວ່າໝົດທູ່ຄົນຊິຕ້ອງຖືກຊຳລະລາງດ້ວຍໄຟ ກັບເຄື່ອງບູຊາທຸກຢ່າງຊິຕ້ອງ
ຖືກຊຳລະລາງດ້ວຍເກືອ
9:50 ຄືເກືອເປັນແນວທີ່ດີ ແຕ່ຄັນເກືອຈືດຈາງລົງໝົດຄວາມເຄັມແລ້ວ ຊິເຮັດໃຫ້
ມັນຄືນມາມີລົດຊາດເຄັມອີກຄືເກົ່າໄດ້ຈັ່ງໃດ ສ່ວນພວກເຈົ້າ ກໍໃຫ້ມີລົດຊາດຊີ-
ວິດດີເດັ່ນຄືເກືອເຄັມໆ ນັ້ນເນາະ ແລ້ວໃຫ້ຢູ່ນຳກັນຢ່າງຢູ່ເຢັນເປັນສຸກເດີ້”

## ມາຣະໂກ ບົດທີ 10

10:1 ລຸກຂຶ້ນແລ້ວ ພຣະເຢຊູ ໄດ້ອອກຈາກໜ້ອງນັ້ນໄປ ເຂົ້າເຂດແດນ ຢູດາຍ
ຕາມທາງຝັ່ງແມ່ນ້ຳ ຍໍດາເນ ຟາກຂ້າງພູ້ນ ແລ້ວພວກຄົນທັງຫລາຍຢູ່ຫັ້ນກໍພາກັນ
ມາຫາເພິ່ນອີກ ເພິ່ນຈັ່ງແອະສອນເຂົາຕາມທີ່ເຄີຍສອນມາແລ້ວ
10:2 ແລ້ວພວກ ຟາຣີຊາຍ ໄດ້ມາລອງໃຈ ພຣະເຢຊູ ຖາມເພິ່ນວ່າ “ມັນຖືກຕ້ອງ
ຕາມກົດບັນຍັດຂອງ ໂມເຊ ຊັ້ນບໍ້ ຄັນຜູ້ຊາຍຊິປະກັນເມຍຂອງໂຕ”
10:3 ແລ້ວເພິ່ນຖາມເຂົາວ່າ “ ໂມເຊ ໄດ້ສັ່ງໄວ້ວ່າຈັ່ງໃດ”
10:4 ພວກເຂົາເລີຍຕອບວ່າ “ ໂມເຊ ອະນຸຍາດໃຫ້ເຮັດໜັງສືເປັນໃບປະກັນ ເພື່ອ-
ຊິປະກັນເມຍໄດ້”
10:5 ແລ້ວ ພຣະເຢຊູ ຈັ່ງໂຕ້ຕອບເຂົາວ່າ “ ໂມເຊ ຍອມຂຽນຂໍ້ປະຕິບັດໄວ້ແນວນັ້ນ
ຍ້ອນໃຈຂອງພວກເຈົ້າແຂງກະດ້າງ
10:6 ແຕ່ວ່າ ຕັ້ງແຕ່ສ້າງໂລກມາ ‘ພຣະເຈົ້າໄດ້ສ້າງຄົນເປັນຜູ້ຊາຍກັບຍິງ

10:7 ຍ້ອນເຫດນີ້ເນາະ ຜູ້ຊາຍຊິຈາກພໍ່ແມ່ໄປ ແລ້ວໄປຜູກພັນຢູ່ກັບຜູ້ເປັນເມຍ
ຂອງເຂົາ
10:8 ແລ້ວເຂົາທັງສອງຊິກາຍເປັນເລືອດເນື້ອໜັງອັນດຽວກັນ' ຄືເຂົາຊິບໍ່ໄດ້ເປັນ
ສອງຕໍ່ໄປ ແຕ່ເປັນເລືອດເນື້ອໜັງອັນໜຶ່ງອັນດຽວກັນເລີຍ
10:9 ຈັ່ງຊັ້ນ ຜູ້ທີ່ໄດ້ຮັບການຜູກພັນກັນໄວ້ຕໍ່ໜ້າພຣະເຈົ້າແລ້ວ ຢ່າໃຫ້ໃຜເຮັດໃຫ້
ເຂົາພັດພາກຈາກກັນເລີຍ"
10:10 ແລ້ວບັດ ພຣະເຢຊູ ໄດ້ເຂົ້າເຮືອນແລ້ວ ພວກລູກສິດຂອງເພິ່ນໄດ້ຖາມເພິ່ນ
ອີກເຖິງເລື່ອງການປະກັນກັນຕໍ່ອີກ
10:11 ເພິ່ນຈັ່ງບອກເຂົາວ່າ "ຄັ່ນຜູ້ຊາຍຜູ້ໃດຊິປະກັນເມຍຂອງໂຕ ແລ້ວໄປເອົາ
ນາງຄົນໃໝ່ເປັນເມຍ ຜູ້ຊາຍຜູ້ນັ້ນໄດ້ຜິດປະເວນີຕໍ່ນາງ
10:12 ແລ້ວຄັ່ນຍິງຜູ້ໃດຊິປະກັນຜົວຂອງໂຕ ແລ້ວໄປເອົາຜົວໃໝ່ ຍິງນັ້ນໄດ້ຜິດ
ປະເວນີຄືກັນ"
10:13 ແລ້ວຍາມນັ້ນ ມີຜູ້ລາງຄົນໄດ້ພາເດັກນ້ອຍມາຫາ ພຣະເຢຊູ ຢາກໃຫ້ເພິ່ນ
ເອົາມືໃສ່ເດັກນ້ອຍນັ້ນ ແຕ່ພວກລູກສິດກໍຫ້າມເຂົາໄວ້ບໍ່ໃຫ້ເຂົ້າໄປໃກ້ເພິ່ນ
10:14 ແຕ່ບັດພໍ ພຣະເຢຊູ ຫລຽວເບິ່ງ ເຫັນລູກສິດເຮັດແນວນັ້ນ ເພິ່ນກໍບໍ່ຄ່ອຍພໍໃຈ
ຈັ່ງບອກລູກສິດວ່າ "ໃຫ້ພວກເດັກນ້ອຍເຂົ້າມາຫາເຮົາ ໂລດ ເດີ້ ຢ່າສູ່ຫ້າມເຂົາ
ເລີຍ ຍ້ອນວ່າລາຊະອານາຈັກຂອງພຣະເຈົ້າມັກຊິເປັນແນວນີ້ຢູ່ແລ້ວ
10:15 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ຜູ້ໃດກໍຕາມ ຄັ່ນບໍ່ຍອມຮັບລາຊະອາ-
ນາຈັກຂອງພຣະເຈົ້າຄືເດັກນ້ອຍ ຜູ້ນັ້ນຊິບໍ່ໄດ້ເຂົ້າລາຊະອານາຈັກນັ້ນເລີຍ"
10:16 ແລ້ວເພິ່ນເລີຍອຸ້ມພວກເດັກນ້ອຍນັ້ນຂຶ້ນມາ ວາງມືເທິງເຂົາ ແລ້ວອວຍພອນ
ເຂົາ
10:17 ແລ້ວບັດພໍ ພຣະເຢຊູ ໄດ້ອອກໄປຊິເຂົ້າທາງຢູ່ແລ້ວ ມີຄົນໜຶ່ງແລ່ນມາຫາ
ເພິ່ນຄຸກເຂົ່າລົງຖາມເພິ່ນວ່າ "ອາຈານເຈົ້າຂ້າ ຜູ້ດີເລີດເອີຍ ຜູ້ຂ້າຊິເຮັດອີຫຍັງຈັ່ງ
ຊິໄດ້ຊີວິດອັນຕະຫລອດໄປເປັນນິດເປັນນໍລະດົກ"
10:18 ພຣະເຢຊູ ເລີຍບອກຄົນນັ້ນວ່າ "ເຈົ້າເອີ້ນເຮົາເປັນຜູ້ດີເລີດຍ້ອນຫຍັງ ບໍ່ມີ
ໃຜຊິດີເລີດດອກ ມີແຕ່ພຣະເຈົ້າອົງດຽວນັ້ນເນາະ

10:19 ເຈົ້າຄືຊິຮູ້ຈັກກົດບັນຍັດຢູ່ແລ້ວທີ່ວ່າ ‘ຢ່າຫລິ້ນຊູ້ຜົວເມຍ ຢ່າຂ້າຄົນ ຢ່າລັກ
ຊັບ ຢ່າເປັນພະຍານບໍ່ຈິງ ຢ່າໂກງເຂົາ ໃຫ້ກຽດພໍ່ແມ່ຂອງໂຕ’”
10:20 ແລ້ວຄົນນັ້ນຕອບເພິ່ນວ່າ “ອາຈານເຈົ້າຂ້າ ຂໍ້ແນວໝູ່ນີ້ຜູ້ຂ້າໄດ້ຖືຮັກສາໄວ້
ຕັ້ງແຕ່ເປັນເດັກມາແລ້ວ”
10:21 ພຣະເຢຊູ ໄດ້ຫລຽວເບິ່ງຜູ້ນັ້ນດ້ວຍຄວາມຮັກແພງ ແລ້ວບອກເຂົາວ່າ “ເຈົ້າ
ຍັງຂາດຢູ່ແນວດຽວ ຄືໃຫ້ໄປຂາຍຊັບສິນທັງໝົດຄູ່ອັນຄູ່ແນວຊຶ່ງເຈົ້າມີຢູ່ຫັ້ນເດີ້
ແລ້ວແຈກຈ່າຍໃຫ້ພວກຄົນຍາກຈົນຜູ້ບໍ່ມີ ເຮັດແລ້ວເຈົ້າຊິມີຊັບສົມບັດ *ທີ່ແທ້ຈິງ*
ໃນສະຫວັນ ແລ້ວໃຫ້ແບກໄມ້ກາງແຂນຕາມເຮົາມາເດີ້”
10:22 ບັດພໍໄດ້ຍິນຄຳຕອບແນວນັ້ນເຂົາກໍເສົ້າໃຈຫລາຍ ຈັ່ງຍ່າງອອກໄປດ້ວຍ
ຄວາມເປັນທຸກ ຍ້ອນເຂົາມີຊັບສິນຫລາຍຂະໜາດ
10:23 ແລ້ວ ພຣະເຢຊູ ໄດ້ຫລຽວເບິ່ງຢູ່ລ້ອມຮອບ ແລ້ວຈັ່ງບອກພວກລູກສິດຂອງ
ເພິ່ນວ່າ “ມັນເປັນການຍາກຂະໜາດ ທີ່ຄົນຮັ່ງມີຊິເຂົ້າໃນລາຊະອານາຈັກຂອງ-
ພຣະເຈົ້າໄດ້”
10:24 ພໍເວົ້າແລ້ວພວກລູກສິດກໍເລີຍແປກໃຈເປັນຕາງຶດໃນຄຳເວົ້າຂອງເພິ່ນ
ພຣະເຢຊູ ເລີຍບອກເຂົາອີກວ່າ “ພວກລູກໆ ເອີຍ ຄົນທີ່ວາງໃຈໃນຊັບສົມບັດນັ້ນ
ມັນເປັນການຍາກຫລາຍທີ່ເຂົາຊິເຂົ້າລາຊະອານາຈັກຂອງພຣະເຈົ້າໄດ້
10:25 ຄື ຊຶ່ງໂຕອູດຊິລອດຮູເຂັມໄດ້ ກໍຊິງ່າຍກວ່າຄົນຮັ່ງມີຊິເຂົ້າໃນລາຊະອານາ-
ຈັກຂອງພຣະເຈົ້າ”
10:26 ແລ້ວພວກລູກສິດກໍແປກໃຈເປັນຕາງຶດພໍພິເລີກ ຈັ່ງເວົ້າກັນວ່າ “ຄັ່ນມັນເປັນ
ຈັ່ງຊັ້ນ ໃຜຊິສາມາດລອດໄດ້”
10:27 ແລ້ວ ພຣະເຢຊູ ຫລຽວເບິ່ງພວກລູກສິດແລ້ວບອກວ່າ “ສຳລັບພວກຄົນນັ້ນ
ມັນເປັນໄປບໍ່ໄດ້ເລີຍ ແຕ່ສຳລັບພຣະເຈົ້າມັນບໍ່ເປັນຈັ່ງຊັ້ນດອກ ຍ້ອນວ່າໝົດຄູ່
ອັນຄູ່ແນວເປັນໄປໄດ້ສຳລັບພຣະເຈົ້າ”
10:28 ບັດນີ້ ເປໂຕ ກໍເລີ່ມເວົ້າກັບ ພຣະເຢຊູ ວ່າ “ນີ້ແຫລະ ພວກຜູ້ຂ້າໄດ້ປະຖິ້ມຄູ່
ອັນຄູ່ແນວ ກັບໄດ້ຕິດຕາມທ່ານມາແລ້ວ”

10:29 ແຕ່ ພຣະເຢຊູ ຕອບວ່າ “ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ວ່າບໍ່ມີໃຜ
ເຄີຍສະລະບ້ານ ຫລືພີ່ນ້ອງຊາຍຍິງ ຫລືພໍ່ແມ່ ຫລືເມຍ ຫລືລູກ ຫລືທີ່ດິນຂອງໂຕ
ຍ້ອນເຫັນແກ່ເຮົາກັບເຫັນແກ່ຂ່າວປະເສີດ
10:30 ທີ່ວ່າເຂົາຊິບໍ່ໄດ້ຮັບການຕອບແທນຮ້ອຍເທົ່າ ຄືໃນປະຈຸບັນນີ້ ບ້ານ ພີ່ນ້ອງ-
ຊາຍຍິງ ແມ່ ລູກ ກັບທີ່ດິນ ຮ່ວມກັນທັງຊິຖືກການຂົ່ມເຫງນຳ ແລ້ວໂລກທີ່ຊິມາ
ໃນພາຍໜ້າ ຊິໄດ້ຊີວິດອັນຕະຫລອດໄປເປັນນິດເປັນມໍລະດົກ
10:31 ແຕ່ວ່າ ມີຫລາຍຄົນທີ່ຢູ່ທາງໜ້າຊິໄດ້ຢູ່ທາງຫລັງ ແລ້ວຜູ້ທີ່ຢູ່ທາງຫລັງຊິໄດ້ຢູ່
ທາງໜ້າ”
10:32 ແລ້ວບັດພວມໄປຕາມທາງທີ່ຂຶ້ນໄປ ກຸງເຢຣູຊາເລັມ ນັ້ນ ພຣະເຢຊູ ກໍນຳ
ໜ້າພວກລູກສິດໄປ ຝ່າຍພວກເຂົາກໍພາກັນຄຶດແປກໃຈເປັນຕາງຶດ ແລ້ວບັດ
ພວມຕາມມາຢູ່ຫັ້ນເຂົາກໍເກີດຢ້ານ ພຣະເຢຊູ ເລີຍເລີ່ມຊິເວົ້າກັບພວກສິບສອງ
ຄົນນັ້ນອີກເທື່ອໜຶ່ງ ເຖິງເຫດການແນວຕ່າງໆ ທີ່ຊິເປັນໄປກັບເພິ່ນ
10:33 ວ່າ “ນີ້ແຫລະ ພວກເຮົາທັງຫລາຍຊິຂຶ້ນໄປຍັງ ກຸງເຢຣູຊາເລັມ ແລ້ວເຮົາຜູ້
ເປັນບຸດມະນຸດຊິຖືກມອບໄວ້ກັບພວກຫົວໜ້າປະໂລຫິດກັບພວກນັກທຳ ແລ້ວ
ເຂົາພວກນັ້ນຊິປັບໂທດເຮົາເຖິງປະຫານ ກັບຊິມອບໄວ້ໃນມືຂອງຄົນຕ່າງຊາດ
10:34 ແລ້ວຄົນຕ່າງຊາດນັ້ນຊິເຍາະເຍີ້ຍເຮົາຜູ້ເປັນບຸດມະນຸດນັ້ນ ແລ້ວຊິຄ້ຽນຕີ ຊິ
ຖົ່ມນໍ້າລາຍໃສ່ ແລ້ວຊິຂ້າ ແລ້ວໃນມື້ທີ່ສາມເຮົາຜູ້ເປັນບຸດມະນຸດຊິໄດ້ເປັນຂຶ້ນມາ
ຈາກຕາຍ”
10:35 ແລ້ວຝ່າຍ ຢາໂກໂບ ກັບ ໂຢຮັນ ລູກຊາຍຂອງ ເຊເບດາຍ ໄດ້ເຂົ້າມາເວົ້າ
ກັບ ພຣະເຢຊູ ວ່າ “ອາຈານເຈົ້າຂ້າ ພວກຜູ້ຂ້າຢາກຊິຂໍໃຫ້ທ່ານໄດ້ເຮັດຕາມຄຳ
ຂໍຮ້ອງແນວຕ່າງໆ ຂອງຜູ້ຂ້າແໜ່”
10:36 ພຣະເຢຊູ ຈັ່ງຖາມເຂົາວ່າ “ພວກເຈົ້າຢາກຊິໃຫ້ເຮົາເຮັດຫຍັງໃຫ້ພວກເຈົ້າ”
10:37 ພວກເຂົາຈັ່ງຂໍນຳເພິ່ນວ່າ “ບັດທ່ານໄດ້ຮັບສະຫງ່າລາສີຂອງທ່ານນັ້ນ ຂໍໃຫ້
ພວກຜູ້ຂ້າມີສິດທີ່ຊິນັ່ງຢູ່ຂ້າງຂວາກັບຂ້າງຊ້າຍຂອງທ່ານແໜ່”

10:38 ພຣະເຢຊູ ໄດ້ບອກເຂົາວ່າ "ພວກເຈົ້າບໍ່ເຂົ້າໃຈເຖິງແນວທີ່ໄດ້ຂໍນັ້ນດອກ ຄື
ວ່າ ພວກເຈົ້າສາມາດດື່ມຈາກຈອກຊຶ່ງເຮົາຊິຕ້ອງດື່ມນັ້ນໄດ້ບໍ້ ກັບສາມາດຖືກ
ຈຸ່ມລົງໄປໃນແນວຊຶ່ງເຮົາຊິຕ້ອງຖືກຈຸ່ມລົງໄປຫັ້ນໄດ້ບໍ້"
10:39 ເຂົາທັງສອງພ້ອມກັນຕອບເພິ່ນວ່າ "ໄດ້ເລີຍ" ພຣະເຢຊູ ເລີຍເວົ້າກັບເຂົາ
ວ່າ "ແມ່ນອີຫລີທີ່ວ່າ ພວກເຈົ້າຊິໄດ້ດື່ມຈາກຈອກຊຶ່ງເຮົາຊິຕ້ອງດື່ມນັ້ນ ກັບຊິຖືກ
ຈຸ່ມລົງໄປໃນແນວຊຶ່ງເຮົາຊິຕ້ອງຖືກຈຸ່ມລົງຫັ້ນນໍາ
10:40 ແຕ່ທີ່ຊິມີສິດນັ່ງຂ້າງຂວາກັບຂ້າງຊ້າຍຂອງເຮົານັ້ນ ມັນບໍ່ແມ່ນແນວທີ່ເຮົາ
ສາມາດຮັບປາກວ່າຊິໃຫ້ສິດໄດ້ ຄືສິດທີ່ຊິນັ່ງຢູ່ຕໍາແໜ່ງນັ້ນ ມັນຊິຕ້ອງມອບໃຫ້ຜູ້
ຊຶ່ງໄດ້ຈັດກຽມໄວ້ໃຫ້"
10:41 ແລ້ວບັດພໍລູກສິດອີກສິບຄົນນັ້ນໄດ້ຍິນເຖິງເລື່ອງທີ່ ຢາໂກໂບ ກັບ ໂຢຮັນ
ໄດ້ຂໍ ເຂົາກໍບໍ່ພໍ ໃຈຫລາຍ
10:42 ແຕ່ ພຣະເຢຊູ ໄດ້ເອີ້ນພວກເຂົາມາເວົ້າວ່າ "ພວກເຈົ້າຮູ້ຢູ່ແລ້ວວ່າ ສໍາລັບ
ຄົນຕ່າງຊາດນັ້ນ ຜູ້ທີ່ມີຕໍາແໜ່ງປົກຄອງມັກຊິຖືອໍານາດເປັນເຈົ້າເປັນນາຍເໜືອ
ເຂົາ ແລ້ວຜູ້ທີ່ດໍາລົງຕໍາແໜ່ງເໜືອນາຍນັ້ນ ກໍມີອໍານາດສັ່ງງານເຂົາອີກ
10:43 ແຕ່ສໍາລັບພວກເຈົ້ານັ້ນມັນຊິບໍ່ເປັນຈັ່ງຊັ້ນດອກ ຄືຜູ້ໃດໃນພວກເຈົ້າຢາກຊິ
ເປັນໃຫຍ່ ຜູ້ນັ້ນຊິເປັນຄົນໃຊ້ຂອງໝູ່
10:44 ຄືຜູ້ໃດກໍຕາມໃນພວກເຈົ້າທີ່ຢາກເປັນໃຫຍ່ເປັນໂຕ ຜູ້ນັ້ນຊິຕ້ອງເປັນຜູ້ຮັບ-
ໃຊ້ຂອງໝູ່ພວກໝົດຄູ່ຄົນ
10:45 ຍ້ອນວ່າ ແມ່ນແຕ່ເຮົາຜູ້ເປັນບຸດມະນຸດ ເຮົາບໍ່ໄດ້ມາເພື່ອຮັບການຮັບໃຊ້ ແຕ່
ມາເພື່ອຊິຮັບໃຊ້ຜູ້ອື່ນ ກັບມອບຊີວິດຂອງເຮົາໄວ້ເປັນຄ່າໄຖ່ສໍາລັບຄົນຫລວງ-
ຫລາຍ"
10:46 ແລ້ວ ພຣະເຢຊູ ກັບພວກລູກສິດໄດ້ມາເຂົ້າເມືອງ ເຢຣິໂກ ແລ້ວບັດພວມ
ອອກຈາກເມືອງ ເຢຣິໂກ ໄປ ຮ່ວມກັນທັງຄົນຫລວງຫລາຍທີ່ຕາມເພິ່ນໄປ ພໍດີມີ-
ຄົນຕາບອດຊື່ ບາຣະຕີມາຍ ເປັນລູກຊາຍຂອງ ທີມາຍ ໄດ້ນັ່ງຂໍທານຢູ່ແຄມທາງ

10:47 ບັດພໍເຂົາໄດ້ຍິນວ່າເປັນ ພຣະເຢຊູ ຊາວ ນາຊາເຣັດ ນັ້ນທີ່ພວມມາ ລາວ ຈັ່ງ
ຕັ້ງຕົ້ນເລີ່ມຮ້ອງຂຶ້ນເປັນສຽງດັ່ງວ່າ " ເຢຊູ ໆ ທ່ານຜູ້ເປັນບຸດກະສັດ ດາວິດ ເຈົ້າ-
ຂ້າເອີຍ ຂໍເມດຕາຜູ້ຂ້າແໜ່ທ້ອນ"
10:48 ແລ້ວມີຫລາຍຄົນໄດ້ສັ່ງຫ້າມເຂົາໄວ້ບໍ່ໃຫ້ເວົ້າ ແຕ່ວ່າແຮງຫ້າມເຂົາກໍແຮງ
ຮ້ອງສຽງດັ່ງຂຶ້ນວ່າ "ບຸດ ດາວິດ ເຈົ້າຂ້າໆ ຂໍເມດຕາຜູ້ຂ້າແໜ່ທ້ອນ"
10:49 ພຣະເຢຊູ ກໍເລີຍຢຸດຢືນຢູ່ ແລ້ວສັ່ງໃຫ້ເອີ້ນຄົນນັ້ນມາ ເຂົາຈັ່ງເອີ້ນຄົນຕາ-
ບອດນັ້ນບອກ ລາວ ວ່າ "ໃຫ້ດີໃຈໄວ້ກັບລຸກຂຶ້ນເດີ້ ພຣະເຢຊູ ພວມເອີ້ນເຈົ້າຢູ່"
10:50 ແລ້ວລາວກໍສະບັດເສື້ອນອກອອກ ລຸກຂຶ້ນງົມມາຫາ ພຣະເຢຊູ
10:51 ແລ້ວ ພຣະເຢຊູ ຖາມເຂົາວ່າ "ເຈົ້າຢາກຊິໃຫ້ເຮົາເຮັດອີຫຍັງໃຫ້ເຈົ້າ" ຄົນ
ຕາບອດນັ້ນເລີຍຕອບເພິ່ນວ່າ "ອາຈານເຈົ້າຂ້າ ຂໍໂຜດຊ່ອຍໃຫ້ຕາຜູ້ຂ້າເຫັນຮຸ່ງ
ໄດ້"
10:52 ແລ້ວ ພຣະເຢຊູ ໄດ້ບອກເຂົາວ່າ "ໃຫ້ໄປເຖີ ເຈົ້າເຊົາເປັນດີແລ້ວຍ້ອນ
ຄວາມເຊື່ອວາງໃຈຂອງເຈົ້າ" ແລ້ວໃນຫວ່າງນັ້ນພໍດີຄົນຕາບອດ ບາຣະຕີມາຍ
ກໍເຫັນໄດ້ກັບໜ້ອງ ເລີຍຕາມ ພຣະເຢຊູ ໄປ

## ມາຣະໂກ ບົດທີ 11

11:1 ແລ້ວບັດ ພຣະເຢຊູ ກັບພວກລູກສິດມາໃກ້ຊິຮອດ ກຸງເຢຣູຊາເລັມ ຄືໄດ້ຮອດ
ໝູ່ບ້ານ ເບດຟາເຄ ກັບໝູ່ບ້ານ ເບດທາເນຍ ແລ້ວ ຊື່ງຢູ່ຕີນພູເຂົາໝາກກອກ-
ເທດ ເພິ່ນເລີຍໃຊ້ລູກສິດສອງຄົນ
11:2 ບອກເຂົາວ່າ "ຊ່ອຍເຂົ້າໄປໃນໝູ່ບ້ານທີ່ຢູ່ທາງໜ້າເຈົ້ານັ້ນ ບັດເຂົ້າໄປແລ້ວ
ພວກເຈົ້າຊິພໍ້ລານ້ອຍໂຕໜຶ່ງຜູກໄວ້ຢູ່ ໂຕນັ້ນຍັງບໍ່ທັນມີໃຜເຄີຍຂຶ້ນຂີ່ເລີຍ ໃຫ້ແກ້
ເຊືອກຈູງມັນມາໃຫ້ເຮົາເລີຍ
11:3 ແລ້ວຄັ່ນມີໃຜຖາມເຈົ້າວ່າ 'ພວກເຈົ້າເຮັດແນວນີ້ຍ້ອນຫຍັງ' ໃຫ້ບອກວ່າ
ນາຍຊີວິດຂອງພວກເຮົາຕ້ອງການຊິໃຊ້ລານ້ອຍໂຕນີ້ ບັດແລ້ວເພິ່ນຊິສົ່ງຄືນມາ
ໃຫ້ເດີ້"
11:4 ແລ້ວລູກສິດສອງຄົນນັ້ນອອກໄປ ກໍໄດ້ຮັບລານ້ອຍໂຕນັ້ນຜູກໄວ້ຢູ່ນອກປະຕູ
ຢູ່ທາງແຍກ ແລ້ວເຂົາກໍເລີຍແກ້ເຊືອກມັນ

11:5 ແລ້ວຜູ້ລາງຄົນທີ່ຢືນຢູ່ແຖວນັ້ນຖາມວ່າ “ພວກເຈົ້າແກ້ເຊືອກລານ້ອຍນີ້ເຮັດ
ຫຍັງ”
11:6 ລູກສິດກໍເລີຍຕອບເຂົາຕາມທີ່ ພຣະເຢຊູ ສັ່ງໄວ້ ແລ້ວຄົນໝູ່ນັ້ນກໍຍອມໃຫ້
ເອົາໄປ
11:7 ແລ້ວລູກສິດຈູງລານ້ອຍມາເຖິງ ພຣະເຢຊູ ແລ້ວກໍເອົາເສື້ອຜ້າຂອງໂຕພາດ
ເທິງຫລັງລາ ແລ້ວເພິ່ນຂຶ້ນຂີ່ລາໂຕນັ້ນ
11:8 ແລ້ວມີຄົນຫລາຍຄົນເອົາເສື້ອຜ້າໜ້າແພຂອງໂຕປູລົງຕາມຖະໜົນຫົນທາງ
ແລ້ວມີຄົນອື່ນໆ ໄດ້ຕັດງ່າໄມ້ອອກຈາກພວກກົກຢູ່ແຖວນັ້ນ ມາປູລົງຕາມທາງ
11:9 ແລ້ວຄົນທີ່ຍ່າງນຳໜ້າເພິ່ນໄປ ກັບຄົນທີ່ຕາມຫລັງມາ ໄດ້ພາກັນໂຫ່ຮ້ອງວ່າ
“ ໂຮຊັນນາ ໆ ຂໍຊົງພຣະຈະເລີນ ໄດ້ພົບແດ່ຜູ້ທີ່ມາໃນພຣະນາມຂອງພຣະຜູ້-
ເປັນເຈົ້າເຖີ້ນ
11:10 ຂໍອວຍພອນລາຊະອານາຈັກມີແດ່ລາຊະອານາຈັກຂອງກະສັດ ດາວິດ ບັນ-
ພະບຸລຸດຂອງພວກເຮົາ ແລ້ວຂໍພຣະອົງທ່ານຜູ້ມາໃນພຣະນາມຂອງພຣະຜູ້ເປັນ-
ເຈົ້າຊົງພຣະຈະເລີນເຖີ້ນ ໂຮຊັນນາ ໆ ໃນທີ່ສູງສຸດ”
11:11 ແລ້ວພໍໄດ້ເຂົ້າ ກຸງເຢຣູຊາເລັມ ພຣະເຢຊູ ໄດ້ເຂົ້າໄປໃນພຣະວິຫານຢູ່ນັ້ນ
ແລ້ວຫລຽວເບິ່ງຢູ່ລ້ອມຮອບ ຄອຍຖ້າສັງເກດໝົດຄູ່ອັນຄູ່ແນວວ່າເປັນຈັ່ງໃດ
ແລ້ວບັດພໍໃກ້ຊິຮອດຄ່ຳ ເພິ່ນຈັ່ງມຸ້ງໜ້າອອກໄປຍັງໝູ່ບ້ານ ເບດທາເນຍ ຮ່ວມ-
ກັນກັບພວກລູກສິດສິບສອງຄົນນັ້ນ
11:12 ແລ້ວພໍຮອດມື້ອື່ນເຊົ້າ ບັດ ພຣະເຢຊູ ກັບລູກສິດອອກຈາກໝູ່ບ້ານ ເບດທາ-
ເນຍ ມາແລ້ວ ເພິ່ນກໍຫິວ
11:13 ແລ້ວພໍຫລຽວເບິ່ງ ເພິ່ນເຫັນຕົ້ນໝາກເດື່ອກົກໜຶ່ງຢູ່ແຕ່ໄກໆ ມີໃບເຕັມ ເພິ່ນ
ຈັ່ງມຸ້ງໜ້າເຂົ້າໄປເບິ່ງວ່າມີໝາກມີໜ່ວຍຢູ່ບໍ້ ບັດມາເຖິງແລ້ວ ເຫັນວ່າບໍ່ມີຮອດໝ
າກ ມີແຕ່ໃບຊື່ໆ ຄືຍັງບໍ່ທັນຮອດຍາມອອກໝາກ
11:14 ພຣະເຢຊູ ຈັ່ງສັ່ງກົກໝາກເດື່ອນັ້ນວ່າ “ຕັ້ງແຕ່ນີ້ໄປ ຊິບໍ່ມີໃຜໄດ້ກິນໝາກ
ຈາກເຈົ້າເລີຍເດີ້” ແລ້ວພວກລູກສິດກໍໄດ້ຍິນຄຳສັ່ງຊຶ່ງເພິ່ນເວົ້ານັ້ນ

11:15 ແລ້ວບັດພໍ ພຣະເຢຊູ ກັບລູກສິດມາເຖິງ ກຸງເຢຣູຊາເລັມ ພຣະເຢຊູ ກໍເຂົ້າ-
ໄປໃນພຣະວິຫານ ແລ້ວຕັ້ງຕົ້ນເລີ່ມຂັບໄລ່ພວກຜູ້ຊື້ຂາຍໃນພຣະວິຫານນັ້ນ
ພ້ອມໄດ້ຄວ່ຳໂຕະພວກຜູ້ຮັບແລກເງິນ ພ້ອມທັງຄວ່ຳມ້ານັ່ງຂອງພວກຂາຍນົກ
ນົກເຂົານຳ
11:16 ແລ້ວເພິ່ນໄດ້ຫ້າມ ບໍ່ໃຫ້ຜູ້ໃດຂົນຂອງແບກຫາມແນວໃດໆ ຍ່າງລັດພຣະວິ-
ຫານ
11:17 ເຮັດແລ້ວເພິ່ນບອກສອນເຂົາວ່າ “ມີ ພຣະຄຳ ຂອງພຣະເຈົ້າຂຽນໄວ້ບໍ່ແມ່ນ
ບໍ້ ວ່າ ‘ພຣະນິເວດຂອງເຮົາ ພວກປະຊາຊາດຊິເອີ້ນກັນວ່າເປັນໝ້ອງອະທິຖານ
ເວົ້ານຳພຣະເຈົ້າ’ ແຕ່ພວກເຈົ້າເຮັດໃຫ້ເປັນຖໍ້າຂອງໂຈນ”
11:18 ແລ້ວບັດພໍພວກນັກທຳກັບພວກຫົວໜ້າປະໂລຫິດໄດ້ຍິນຮອດແນວທີ່ ພຣະ-
ເຢຊູ ເຮັດຢູ່ຫັ້ນ ເຂົາຈັ່ງຫາຊ່ອງທາງໃນທາງອ້ອມທີ່ຊິຈັດການເຮັດຮ້າຍເພິ່ນ ຄື
ພວກເຂົາຢ້ານ ພຣະເຢຊູ ຍ້ອນວ່າຄົນທັງຫລາຍຊາບຊຶ້ງປະທັບໃຈໃນຄຳສອນ
ຂອງເພິ່ນ
11:19 ແລ້ວພໍຮອດຍາມແລງ ພຣະເຢຊູ ໄດ້ອອກຈາກ ກຸງເຢຣູຊາເລັມ ໄປ
11:20 ແລ້ວຍາມມື້ອື່ນເຊົ້າມາ ພໍເພິ່ນກັບພວກລູກສິດໄດ້ຜ່ານໝ້ອງກົກໝາກເດື່ອ
ຢູ່ຫັ້ນ ກໍເຫັນວ່າມັນຫ່ຽວແຫ້ງໝົດຈາກຮາກຂຶ້ນມາ
11:21 ເປໂຕ ຈັ່ງຄຶດຊວດ ເລີຍເວົ້າກັບ ພຣະເຢຊູ ວ່າ “ອາຈານເຈົ້າຂ້າ ນີ້ແຫລະ
ກົກໝາກເດື່ອທີ່ທ່ານໄດ້ສາບແຊ່ງນັ້ນກໍຫ່ຽວແຫ້ງໄປແລ້ວ”
11:22 ພຣະເຢຊູ ຈັ່ງຕອບໃຫ້ພວກລູກສິດວ່າ “ໃຫ້ເຊື່ອວາງໃຈໃນພຣະເຈົ້າເດີ້
11:23 ຄື ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ຜູ້ໃດກໍຕາມຊິສັ່ງພູເຂົາລູກນີ້ວ່າ ‘ໃຫ້
ຍົກຍ້າຍອອກໄປລົງທະເລເດີ້’ ໂດຍບໍ່ມີການສົງໄສໃນໃຈ ແຕ່ເຊື່ອວາງໃຈວ່າຊິ
ເປັນໄປຕາມທີ່ສັ່ງ ມັນກໍຊິເປັນໄປຕາມແນວນັ້ນອີຫລີ
11:24 ຈັ່ງຊັ້ນ ເຮົາບອກພວກເຈົ້າວ່າ ອີຫຍັງກໍຕາມທີ່ເຈົ້າປາດຖະໜານຳພຣະເຈົ້າ
ບັດຍາມເຈົ້າຊິອະທິຖານເວົ້ານຳເພິ່ນ ໃຫ້ເຊື່ອວ່າໄດ້ຮັບແລ້ວ ແລ້ວເຈົ້າຊິໄດ້ແນວ
ນັ້ນອີຫລີ

11:25 ແລ້ວບັດເຈົ້າຢືນອະທິຖານເວົ້ານຳພຣະເຈົ້າ ຄັນເຈົ້າມີແນວຂັດຂ້ອງອີຫຍັງ
ກັບຜູ້ໜຶ່ງຜູ້ໃດ ໃຫ້ອະໄພຜູ້ນັ້ນຊະ ເພື່ອພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ສະຖິດໃນ
ສະຫວັນ ຊິກະລຸນາອະໄພການຜິດພາດຂອງເຈົ້ານຳ
11:26 ແຕ່ຄັນພວກເຈົ້າບໍ່ໃຫ້ອະໄພເຂົາ ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າ ຜູ້ສະຖິດໃນ
ສະຫວັນ ຊິບໍ່ໄດ້ໃຫ້ອະໄພການຜິດພາດຂອງເຈົ້າຄືກັນ"
11:27 ແລ້ວ ພຣະເຢຊູ ກັບພວກລູກສິດໄດ້ວົນກັບມາຍັງ ກຸງເຢຣູຊາເລັມ ອີກ ແລ້ວ
ບັດພໍເພິ່ນພວມຊິຍ່າງເຂົ້າໃນພຣະວິຫານ ກໍມີພວກຫົວໜ້າປະໂລຫິດ ຮ່ວມກັບ
ກັບພວກນັກທຳພ້ອມກັບພວກຜູ້ຫລັກຜູ້ໃຫຍ່ ໄດ້ເຂົ້າມາຫາເພິ່ນ
11:28 ແລ້ວຈັ່ງຊັກຖາມເພິ່ນວ່າ "ເຈົ້າໄດ້ຮັບອະນຸຍາດມາແຕ່ໃສທີ່ຊິເຮັດ *ອາລະ-
ວາດ* ແນວນັ້ນ ຄືໃຜເປັນຜູ້ອະນຸຍາດໃຫ້ເຈົ້າເຮັດ"
11:29 ພຣະເຢຊູ ຈັ່ງຕອບເຂົາວ່າ "ເຮົາຊິຖາມພວກເຈົ້າແນວໜຶ່ງກ່ອນ ໃຫ້ຕອບ
ເຮົາມາເບິ່ງ ແລ້ວເຮົາຊິບອກເຈົ້າວ່າເຮົາໄດ້ເຮັດການນີ້ໂດຍສິດທິອັນໃດ
11:30 ຄືວ່າ ສິດທິໃຫ້ຄົນຈຸ່ມນ້ຳຂອງ ໂຢຮັນ ນັ້ນ ໄດ້ມາຈາກສະຫວັນ ຫລືມາຈາກ
ຄົນຊື່ໆ ໃຫ້ຕອບມາເບິ່ງ"
11:31 ແລ້ວພວກເຂົາຈັ່ງປຶກສາກັນວ່າ "ຄັນພວກເຮົາຊິວ່າ 'ມາຈາກສະຫວັນ' ເຂົາ
ຊິຖາມເຮົາວ່າ 'ເປັນຫຍັງພວກເຈົ້າຈັ່ງບໍ່ໄດ້ເຊື່ອ ໂຢຮັນ ຊັ່ນ'
11:32 ແຕ່ຄັນພວກເຮົາຊິວ່າ 'ມາຈາກຄົນ' *ມັນຊິບໍ່ດີ* " (ພວກເຂົາເວົ້າຈັ່ງຊີ້ ຍ້ອນ
ເຂົາຢ້ານພວກປະຊາຊົນ ຄືຄົນທັງຫລາຍຖືກັນວ່າ ໂຢຮັນ ນັ້ນເປັນຜູ້ເປັນປາກ-
ເປັນສຽງຂອງພຣະເຈົ້າອີຫລີ)
11:33 ເຂົາຈັ່ງຕອບ ພຣະເຢຊູ ວ່າ "ພວກເຮົາບໍ່ສາມາດຕອບໄດ້" ພຣະເຢຊູ ກໍເລີຍ
ບອກເຂົາວ່າ "ຈັ່ງຊັ້ນ ເຮົາຊິບໍ່ບອກພວກເຈົ້າຄືກັນວ່າ ເຮົາເຮັດການນັ້ນໂດຍສິດ-
ທິອັນໃດ"

## ມາຣະໂກ ບົດທີ 12

12:1 ແລ້ວ ພຣະເຢຊູ ຈັ່ງຕັ້ງຕົ້ນເລີ່ມເວົ້າກັບເຂົາເປັນຄຳປຽບທຽບວ່າ "ມີຜູ້ຊາຍຄົນ
ໜຶ່ງໄດ້ເຮັດສວນອະງຸ່ນ ແລ້ວໄດ້ເຮັດຮົ້ວລ້ອມໄວ້ ແລ້ວໄດ້ຂູດຫລຸມເພື່ອເກັບ

ເຫລົ້າອະງຸ່ນໄວ້ ແລ້ວໄດ້ສ້າງຫໍໄວ້ໃຫ້ເບິ່ງແຍງສວນ ສຳເລັດແລ້ວກໍໃຫ້ພວກຄົນ
ສວນເຊົ່າ ພໍເຮັດແລ້ວນາຍສວນກໍອອກໄປຢູ່ເມືອງໄກໆ
12:2 ແລ້ວບັດຮອດຍາມເກັບໝາກອະງຸ່ນ ນາຍສວນຈັ່ງໃຊ້ຜູ້ຮັບໃຊ້ຄົນໜຶ່ງໄປຫາ
ຄົນເຊົ່າສວນນັ້ນ ເພື່ອຊິໄດ້ຮັບເອົາສ່ວນແບ່ງຂອງສວນອະງຸ່ນຈາກພວກຄົນເຊົ່າ
ສວນນັ້ນ
12:3 ແຕ່ຝ່າຍຄົນເຊົ່າສວນພວກນັ້ນກໍຈັບເອົາຜູ້ຮັບໃຊ້ຂອງນາຍສວນ ຄ້ຽນຕີ ລາວ
ແລ້ວໄລ່ກັບເມືອມືບໍ່
12:4 ແລ້ວນາຍສວນໃຊ້ຜູ້ຮັບໃຊ້ອີກຄົນໜຶ່ງ ໃຫ້ໄປຫາພວກຄົນເຊົ່າສວນອີກເທື່ອ
ໜຶ່ງ ບັດນີ້ຄົນເຊົ່າສວນນັ້ນກໍເອົາຫີນຂວ້າງຜູ້ຮັບໃຊ້ນັ້ນໃຫ້ບາດເຈັບຫົວແຕກ
ແລ້ວໄລ່ກັບເມືອອີກ ເຮັດແນວໂຫດຫ້ຽມໃສ່ ລາວ ຢ່າງເປັນຕາອາຍ
12:5 ແລ້ວອີກເທື່ອໜຶ່ງ ນາຍສວນໄດ້ໃຊ້ຜູ້ຮັບໃຊ້ອີກຄົນໜຶ່ງໄປ ບັດນີ້ພວກເຂົາກໍ
ຂ້າຜູ້ຮັບໃຊ້ນັ້ນຊະ ແລ້ວນາຍສວນຍັງໃຊ້ຜູ້ຮັບໃຊ້ໄປອີກຫລາຍຄົນ ແຕ່ພວກເຊົ່າ
ສວນນັ້ນກໍຄ້ຽນຕີແໜ່ ຂ້າຖິ້ມແໜ່
12:6 ບັດນີ້ນາຍສວນມີລູກຊາຍທີ່ຮັກແພງຫລາຍຜູ້ໜຶ່ງ ຈັ່ງໃຊ້ລູກຜູ້ນັ້ນໄປເປັນ
ເທື່ອສຸດທ້າຍ ເວົ້າວ່າ ‘ພວກເຂົາຄືຊິເຄົາລົບລູກຊາຍຂອງເຮົາຢູ່ດອກ’
12:7 ແຕ່ບັດນີ້ ພວກເຊົ່າສວນເວົ້າກັນວ່າ ‘ຄົນນີ້ເນາະ ເປັນທາຍາດຜູ້ຊິຮັບມໍລະ-
ດົກ ມາເຖີດ ໃຫ້ເຮົາຂ້າມັນຊະ ແລ້ວມໍລະດົກນັ້ນຊິຕົກເປັນຂອງພວກເຮົາ’
12:8 ພວກເຂົາຈັ່ງພາກັນຈັບລູກຊາຍຂອງນາຍສວນ ແລ້ວຂ້າເຂົາເລີຍ ເອົາສົບໄປ
ຖິ້ມໄວ້ນອກສວນອະງຸ່ນ
12:9 ຈັ່ງຊັ້ນ ນາຍສວນອະງຸ່ນຊິເຮັດແນວໃດບັດນີ້ ລາວກໍຊິມາເຮັດຮ້າຍພວກເຊົ່າ
ສວນນັ້ນ ໂລດ ແລ້ວຊິເອົາສວນອະງຸ່ນນັ້ນໃຫ້ຜູ້ອື່ນເຊົ່າແທນ
12:10 ແລ້ວພວກເຈົ້າຍັງບໍ່ທັນອ່ານ ພຣະຄຳ ຕອນນີ້ບໍ້ ທີ່ວ່າ ‘ສີລາຊຶ່ງຊ່າງກໍ່ຫີນໄດ້
ປະຕິເສດບໍ່ຍອມໃຊ້ ໄດ້ກັບກາຍເປັນສີລາມຸມເອກແລ້ວ
12:11 ຄື ກິດຈະການ ອັນຍິ່ງໃຫຍ່ນີ້ມາຈາກອົງພຣະຜູ້ເປັນເຈົ້າ ເປັນການອັດສະຈັນ
ໃນສາຍຕາຂອງຄົນເຮົາທັງຫລາຍ’”

12:12 ບັດນີ້ພວກເຂົາຈັ່ງຫາໂອກາດຈັບ ພຣະເຢຊູ ແຕ່ວ່າເຂົາຢ້ານພວກປະຊາຊົນ
ຄືເຂົາຮູ້ໂຕວ່າ ເພິ່ນໄດ້ເວົ້າຄຳປຽບທຽບນີ້ຖືກພວກເຂົາເອງ ພວກເຂົາກໍເລີຍຈາກ
ເພິ່ນໄປ
12:13 ບັດນີ້ເຂົາໄດ້ໃຊ້ຜູ້ລາງຄົນໃນພວກ ຟາຣີຊາຍ ກັບພັກພວກ ເຮໂຣດ ໄປຫາ
ພຣະເຢຊູ ເພື່ອຊິຫາຈັບຜິດໃນຄວາມເວົ້າຂອງເພິ່ນ
12:14 ບັດພວກເຂົານັ້ນມາເຖິງແລ້ວ ກໍເວົ້າກັບ ພຣະເຢຊູ ວ່າ “ອາຈານ ພວກເຮົາ
ຮູ້ຈັກຢູ່ວ່າ ເຈົ້າເປັນຄົນຊື່ສັດ ກັບບໍ່ໄດ້ເອົາໃຈຜູ້ໃດ ຍ້ອນເຈົ້າບໍ່ໄດ້ເຫັນແກ່ໜ້າຜູ້-
ໃດ ແຕ່ໄດ້ສອນໃນທາງຂອງພຣະເຈົ້າອີຫລີ ພວກເຮົາຂໍຖາມວ່າ ການທີ່ຊິສົ່ງພາ-
ສີສ່ວຍໃຫ້ຈັກກະພັດ ກາຍຊາ ນັ້ນ ມັນຖືກຕ້ອງຕາມກົດບັນຍັດຫລືບໍ່
12:15 ເຮົາຊິສົ່ງດີຫລືບໍ່ສົ່ງດີ” ແຕ່ ພຣະເຢຊູ ກໍຮູ້ທັນອຸບາຍຂອງເຂົາຈັ່ງເວົ້າກັບເຂົາ
ວ່າ “ພວກເຈົ້າມາທົດລອງເຮົາຍ້ອນຫຍັງ ໃຫ້ເອົາເງິນຕາຂອງ ໂຣມ ຫລຽນໜຶ່ງມາ
ໃຫ້ເຮົາເບິ່ງ”
12:16 ເຂົາກໍເອົາຫລຽນໜຶ່ງມາໃຫ້ ພຣະເຢຊູ ເພິ່ນຈັ່ງຖາມເຂົາວ່າ “ຮູບກັບຄຳຈາ-
ລຶກນີ້ເປັນຂອງໃຜ” ເຂົາຕອບເພິ່ນວ່າ “ຂອງ ກາຍຊາ ”
12:17 ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ “ແນວທີ່ເປັນຂອງ ກາຍຊາ ໃຫ້ຖວາຍໃຫ້
ກາຍຊາ ຊະ ແຕ່ແນວທີ່ເປັນຂອງພຣະເຈົ້າ ໃຫ້ຖວາຍແດ່ພຣະເຈົ້າເດີ້” ຝ່າຍ
ພວກເຂົາກໍເລີຍແປກໃຈເປັນຕາງຶດໃນເພິ່ນ
12:18 ໃນຫວ່າງນັ້ນມີພວກ ຊາດູກາຍ ມາຫາ ພຣະເຢຊູ ພວກນີ້ວ່າ ເຂົາບໍ່ໄດ້ເຊື່ອ
ໃນການເປັນຂຶ້ນມາຈາກຕາຍ ເຂົາຈັ່ງຖາມເພິ່ນວ່າ
12:19 “ອາຈານ ໂມເຊ ໄດ້ຂຽນສັ່ງພວກຄົນ ຢິວ ເຮົາໄວ້ວ່າ ‘ຄັ່ນຜູ້ຊາຍຜູ້ໃດຕາຍ
ປະເມຍ ແຕ່ບໍ່ໄດ້ມີລູກກັບນາງ ໃຫ້ນ້ອງຊາຍຮັບເອື້ອຍໃພ້ນັ້ນໄວ້ເປັນເມຍຂອງ-
ໂຕ ເພື່ອສືບທອດເຊື້ອສາຍຂອງພີ່ຜູ້ຊາຍໄວ້ *ຕາມປະເພນີເຮົາ* ’
12:20 ບັດນີ້ ມີພີ່ນ້ອງຜູ້ຊາຍເຈັດຄົນ ອ້າຍກົກເອົາເມຍ ແລ້ວກໍຕາຍປະນາງໂດຍບໍ່
ມີເຊື້ອສາຍສືບທອດ

12:21 ແລ້ວຜູ້ຊາຍຜູ້ທີ່ສອງຮັບເອົານາງມາເປັນເມຍໂຕ ແລ້ວກໍຕາຍປະຍັງບໍ່ມີ
ເຊື້ອສາຍສືບທອດຄືກັນກັບອ້າຍ ແລ້ວຜູ້ຊາຍຜູ້ທີ່ສາມທີ່ສີ່ກໍເຮັດແນວດຽວຖັດ-
ກັນໄປ
12:22 ແລ້ວພີ່ນ້ອງທັງເຈັດຄົນນີ້ກໍໄດ້ຮັບແມ່ຍິງຜູ້ນັ້ນໄວ້ເປັນເມຍຂອງໂຕຈັ່ງຕາຍ
ປະບໍ່ມີເຊື້ອສາຍສືບທອດຈັກຄົນ ແລ້ວໃນທີ່ສຸດແມ່ຍິງນັ້ນກໍຕາຍນຳ
12:23 ຈັ່ງຊັ້ນ ໃນມື້ທີ່ຄົນເຮົາຊິເປັນຂຶ້ນມາຈາກຕາຍນັ້ນ ບັດເຂົາທັງເຈັດເປັນຂຶ້ນມາ
ແລ້ວ ຍິງນັ້ນຊິເປັນເມຍຂອງໃຜດ້ວຍນາງເຄີຍເປັນເມຍຂອງຜູ້ຊາຍທັງເຈັດມາ
ແລ້ວ”
12:24 ພຣະເຢຊູ ຈັ່ງຕອບເຂົາວ່າ “ພວກເຈົ້າຄຶດຜິດຊະແລ້ວ ຄືພວກເຈົ້າບໍ່ຮູ້ຈັກ
ພຣະຄຳ ກັບບໍ່ຮູ້ຈັກລິດເດດຂອງພຣະເຈົ້າຊັ້ນບໍ້
12:25 ຄືວ່າບັດຄົນຊິເປັນຂຶ້ນມາຈາກຕາຍນັ້ນ ເຂົາຊິບໍ່ມີການກິນດອງ ຍົກໃຫ້ເປັນ
ຜົວເມຍກັນອີກ ແຕ່ຊິເປັນ *ໂສດ* ຄືເທວະທູດຢູ່ເທິງຟ້າສະຫວັນ
12:26 ແລ້ວສຳລັບເລື່ອງການເປັນຂຶ້ນມາຂອງຄົນຕາຍໄປແລ້ວນັ້ນ ພວກເຈົ້າຍັງບໍ່
ໄດ້ອ່ານຄຳພີທີ່ ໂມເຊ ຂຽນຊັ້ນບໍ້ ຕອນເລື່ອງທີ່ ລາວ ໄດ້ເຈີເຈີພຸ່ມໄມ້ ເປັນໜ້ອງທີ່
ພຣະເຈົ້າໄດ້ເວົ້າໄວ້ກັບ ລາວ ວ່າ ‘ເຮົາເປັນພຣະເຈົ້າຂອງ ອັບຣາຮາມ ເປັນ
ພຣະເຈົ້າຂອງ ອີຊາກ ກັບເປັນພຣະເຈົ້າຂອງ ຢາໂຄບ ’
12:27 ຄືວ່າ ເພິ່ນບໍ່ໄດ້ເປັນພຣະເຈົ້າຂອງຄົນຕາຍ ແຕ່ເປັນພຣະເຈົ້າຂອງຄົນເປັນ
ພວກເຈົ້າຈັ່ງຜິດພາດຫລາຍຂະໜາດ”
12:28 ແລ້ວມີຜູ້ໜຶ່ງໃນພວກນັກທຳນັ້ນ ບັດມາກໍໄດ້ຍິນພວກເຂົາໄລ່ລຽງກັນ ຄຶດ
ເຫັນວ່າ ພຣະເຢຊູ ຕອບເຂົາໄດ້ດີຫລາຍ ຈັ່ງຖາມເພິ່ນວ່າ “ໃນກົດບັນຍັດທັງໝົດ
ນັ້ນ ຂໍ້ໃດສຳຄັນເປັນອັນດັບໜຶ່ງ”
12:29 ພຣະເຢຊູ ຈັ່ງຕອບຄົນນັ້ນວ່າ “ໃນພຣະບັນຍັດນັ້ນຂໍ້ທີ່ເປັນອັນດັບໜຶ່ງຄືວ່າ
‘ໃຫ້ຟັງເອົາເດີ້ ໂອ ຄົນ ອິສະຣາເອນ ເອີຍ ອົງພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງ
ພວກເຮົາ ເປັນອົງພຣະຜູ້ເປັນເຈົ້າແຕ່ອົງດຽວ

12:30 ກັບວ່າ ໃຫ້ພວກເຈົ້າຮັກອົງພຣະຜູ້ເປັນເຈົ້າ ຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍ-
ສຸດຈິດສຸດໃຈຂອງເຈົ້າ ດ້ວຍໝົດຄວາມຄຶດ ກັບດ້ວຍໝົດແຮງຂອງເຈົ້າ' ນີ້ແມ່ນ
ກົດບັນຍັດທີ່ເປັນເອກເປັນໃຫຍ່ກວ່າໝູ່
12:31 ກັບກົດບັນຍັດທີ່ສອງລົງມາຫັ້ນ ກໍຄືກັນ ຄືວ່າ 'ໃຫ້ຮັກເພື່ອນບ້ານຄືກັນກັບ
ຮັກໂຕເອງ' ກົດບັນຍັດອື່ນໆ ທີ່ໃຫຍ່ກວ່າທັງສອງນີ້ບໍ່ມີເລີຍ"
12:32 ບັດນີ້ ນັກທຳຄົນນັ້ນເວົ້າກັບ ພຣະເຢຊູ ວ່າ "ດີແລ້ວອາຈານເຈົ້າຂ້າ ທ່ານໄດ້
ເວົ້າແນວແມ່ນອີຫລີ ຍ້ອນວ່າມີພຣະເຈົ້າແຕ່ຜູ້ດຽວເພິ່ນ ນອກຈາກເພິ່ນແລ້ວ
ພຣະເຈົ້າອື່ນໆ ກໍບໍ່ມີເລີຍ
12:33 ກັບວ່າ ຊິ່ງຊິຮັກເພິ່ນດ້ວຍສຸດໃຈ ສຸດຄວາມເຂົ້າໃຈ ສຸດຈິດວິນຍານ ກັບສຸດ
ແຮງ ແລ້ວທີ່ຊິຮັກເພື່ອນບ້ານຄືໄດ້ຮັກໂຕເອງ ກໍປະເສີດກວ່າເຄື່ອງຖວາຍ ກັບ
ເຄື່ອງເຜົາບູຊາທັງໝົດ"
12:34 ບັດ ພຣະເຢຊູ ເຫັນວ່າ ນັກທຳຄົນນັ້ນເວົ້າໂດຍຊຳນານສະຫລາດສະຫລຽວ
ຈັ່ງບອກເຂົາວ່າ "ເຈົ້າບໍ່ຫ່າງໄກຈາກລາຊະອານາຈັກຂອງພຣະເຈົ້າແລ້ວ" ຕັ້ງແຕ່
ນັ້ນມາບໍ່ມີໃຜກ້າຖາມເພິ່ນອີກຕໍ່ໄປເລີຍ
12:35 ແລ້ວບັດຍາມ ພຣະເຢຊູ ພວມສອນຢູ່ໃນພຣະວິຫານກໍໄດ້ຖາມເຂົາວ່າ "ເປັນ
ຫຍັງທີ່ພວກນັກທຳສອນວ່າ ພຣະຄຣິດ ຜູ້ທີ່ຊິມານັ້ນເປັນບຸດຂອງ *ກະສັດ* ດາ-
ວິດ
12:36 ຄືວ່າ ດາວິດ ເອງໄດ້ເວົ້າໂດຍໃນການຊົງນຳຂອງ ພຣະວິນຍານ ວ່າ 'ນາຍ
ຊີວິດ ໄດ້ບອກນາຍຊີວິດຂອງຜູ້ຂ້າວ່າ ໃຫ້ນັ່ງຢູ່ທາງຂວາເຮົາຈົນກວ່າເຮົາຊິເຮັດ
ໃຫ້ສັດຕູເຈົ້າເປັນໝ້ອງພັກຕີນຂອງເຈົ້າເດີ້'
12:37 ຂະໜາດ ດາວິດ ເອງຍັງໄດ້ເອີ້ນເພິ່ນຜູ້ນັ້ນວ່າ 'ນາຍຊີວິດຂອງຜູ້ຂ້າ' ຈັ່ງຊັ້ນ
ຄັ່ນເພິ່ນເປັນນາຍຊີວິດຂອງ ດາວິດ ຊິເປັນລູກຂອງ ລາວ ໄດ້ຈັ່ງໃດ" ແລ້ວຝ່າຍ
ພວກຄົນທຳມະດາສາມັນຢູ່ຫັ້ນ ກໍໄດ້ຮັບຟັງ ພຣະເຢຊູ ດ້ວຍຄວາມຍິນດີ
12:38 ແລ້ວ ພຣະເຢຊູ ສອນເຂົາອີກວ່າ "ໃຫ້ລະວັງພວກນັກທຳໃຫ້ດີເດີ້ ຄືພວກນີ້
ມັກນຸ່ງເສື້ອຄຸມຍາວເນື້ອຜ້າລາຄາແພງໆ ໄປໆ ມາໆ ແລ້ວມັກໃຫ້ຄົນທັກທາຍ
ພວກເຂົາຢູ່ກາງຕະຫລາດ

12:39 ກັບມັກນັ່ງໜ້ອງສຳຄັນໃນສາລາທຳ ກັບໜ້ອງມີກຽດໃນງານລ້ຽງຕ່າງໆ ນຳ
12:40 ແມ່ນພວກນີ້ເນາະ ທີ່ມັກຖືເອົາເອົາເຮືອນຂອງແມ້ໝ້າຍ ກັບມັກແກ້ງອະທິ-
ຖານວ່າເວົ້ານຳພຣະເຈົ້າຢ່າງຍືດຍາວ ຄົນພວກນີ້ເນາະຊິຕ້ອງຖືກການຕັດສິນ
ລົງໂທດແຮງໜັກກວ່າ”
12:41 ແລ້ວຫວ່າງນັ້ນ ພຣະເຢຊູ ກໍນັ່ງທາງໜ້າຕູ້ເງິນຖວາຍ ແລ້ວຄອຍຖ້າສັງເກດ
ຕ່າງຄົນຕ່າງນຳເອົາເງິນມາຢ່ອນໃສ່ຕູ້ນັ້ນ ແລ້ວພວກຄົນຮັ່ງມີຫລາຍຄົນໄດ້ເອົາ
ເງິນຫລາຍໆ ມາຢ່ອນໃສ່
12:42 ແລ້ວມີແມ້ໝ້າຍຄົນໜຶ່ງເປັນຄົນຍາກຈົນ ເອົາຫລຽນທອງແດງສອງຫລຽນ ມີ
ຄ່າປະມານຫ້າກີບໄດ້ເອົາມາຢ່ອນໃສ່ຕູ້ນັ້ນໄວ້ນຳ
12:43 ແລ້ວ ພຣະເຢຊູ ຈັ່ງເອີ້ນພວກລູກສິດຂອງເພິ່ນມາເວົ້າກັບເຂົາວ່າ “ເຮົາຊິ-
ບອກຄວາມຈິງໃຫ້ພວກເຈົ້າເດີ້ ແມ້ໝ້າຍຍາກຈົນຄົນນີ້ເນາະ ອັນທີ່ເຂົາໃສ່ໃນຕູ້
ເງິນຖວາຍນັ້ນ ກໍແຮງຫລາຍກວ່າໝົດຄູ່ຄົນທີ່ໄດ້ໃສ່ໄວ້ນັ້ນ
12:44 ຍ້ອນວ່າພວກຄົນອື່ນໆ ນັ້ນ ໄດ້ເອົາເງິນເຫລືອໃຊ້ຂອງເຂົາມາຢ່ອນໃສ່ໄວ້
ແຕ່ຍິງທຸກຍາກລຳບາກຜູ້ນີ້ ໄດ້ເອົາເງິນທັງໝົດຂອງເຂົາມາຢ່ອນໃສ່ຈົນໝົດກົ້ງງ
ເປັນເງິນຊຶ່ງນາງໄດ້ສຳຮອງໄວ້ເພື່ອລ້ຽງຊີວິດຂອງເຂົາ”

## ມາຣະໂກ ບົດທີ 13

13:1 ແລ້ວບັດພໍ ພຣະເຢຊູ ພວມອອກຈາກພຣະວິຫານ ມີລູກສິດຜູ້ໜຶ່ງຂອງເພິ່ນ
ເວົ້າກັບເພິ່ນວ່າ “ອາຈານເຈົ້າຂ້າ ນີ້ແຫລະ ກ້ອນຫີນກັບຕຶກໝູ່ນີ້ກໍໃຫຍ່ພິເລີກ
ແທ້”
13:2 ແລ້ວ ພຣະເຢຊູ ຕອບລູກສິດນັ້ນວ່າ “ຕຶກໃຫຍ່ທີ່ພວກເຈົ້າເຫັນນີ້ ຫີນກ້ອນ
ໃຫຍ່ທີ່ຊ້ອນກໍ່ກັນຢູ່ຫັ້ນ ຊິບໍ່ເຫລືອຈັກກ້ອນທີ່ຊິບໍ່ຖືກພັງລົງ”
13:3 ແລ້ວບັດເພິ່ນພວມນັ່ງຢູ່ພູເຂົາໝາກກອກເທດໜ້າພຣະວິຫານນັ້ນ ເປໂຕ
ຢາໂກໂບ ໂຢຮັນ ກັບ ອັນເດອາ ໄດ້ມາຖາມເພິ່ນເປັນສ່ວນໂຕວ່າ
13:4 “ຂໍບອກພວກຜູ້ຂ້າແໜ່ ຄືເຫດການທີ່ເວົ້ານີ້ ມັນຊິເກີດຂຶ້ນຍາມໃດ ແລ້ວຊິມີ
ເຄື່ອງໝາຍສຳຄັນອີຫຍັງ ທີ່ຊິບົ່ງບອກເຖິງຍາມທີ່ມັນຊິເປັນໄປຫັ້ນ”

13:5 ພຣະເຢຊູ ເລີຍຕອບເຂົາວ່າ "ລະວັງໃຫ້ດີເດີ້ ຢ່າໃຫ້ຜູ້ໃດລໍ້ລວງພວກເຈົ້າໃຫ້
ຫລົງ
13:6 ຄືຊິມີຫລາຍຄົນມາແອບອ້າງນາມຂອງເຮົາ ຫາວ່າ 'ເຮົານີ້ເປັນ ພຣະຄຣິດ '
ແລ້ວເຂົາຊິລໍ້ລວງຫລາຍຄົນໃຫ້ຫລົງໄປ
13:7 ແລ້ວບັດພວກເຈົ້າໄດ້ຍິນວ່າມີສົງຄາມ ຫລືຂ່າວລືຕ່າງໆ ເຖິງເລື່ອງສົງຄາມ
ຢ່າແຕກຕື່ນຕົກໃຈຫລາຍເດີ້ ຄືແນວຕ່າງໆ ໝູ່ນີ້ຈໍາເປັນຊິຕ້ອງເປັນໄປຢູ່ແລ້ວ
ແຕ່ສຸດປາຍນັ້ນຍັງບໍ່ທັນມາຮອດມາເຖິງດອກ
13:8 ຍ້ອນວ່າ ປະເທດຕ່າງໆ ກັບລາຊະອານາຈັກຕ່າງໆ ຊິລຸກຂຶ້ນຕໍ່ສູ້ກັນ ທັງຊິມີ
ແຜ່ນດິນໄຫວຕາມໝ້ອງຕ່າງໆ ກັບຊິເກີດການອຶດຢາກກັນດານອາຫານ ກັບມີ
ຄວາມທຸກຄວາມຍາກ ເຫດການແນວໝູ່ນີ້ເປັນຂັ້ນຕອນທໍາອິດຂອງຄວາມທຸກ
ລໍາບາກອັນໃຫຍ່ຍິ່ງທີ່ຊິມາໃນພາຍໜ້ານັ້ນ
13:9 ແຕ່ວ່າ ໃຫ້ລະວັງໂຕໃຫ້ດີເດີ້ ຄືເຂົາຊິຈັບພວກເຈົ້າມອບໄວ້ຕໍ່ໜ້າສະພາ
ແລ້ວພວກເຈົ້າຊິຖືກການຄ້ຽນຕີໃນສາລາທໍາ ແລ້ວຊິຕ້ອງຢືນຕໍ່ໜ້າເຈົ້າໜ້າທີ່
ບ້ານເມືອງ ກັບຕໍ່ໜ້າພວກກະສັດຍ້ອນພວກເຈົ້າເຫັນແກ່ເຮົາ ເຫດການນີ້ກໍເພື່ອ
ເປັນພະຍານໃຫ້ເຂົາຟັງ
13:10 ແລ້ວຂ່າວປະເສີດຊິຕ້ອງໄດ້ຮັບການປ່າວປະກາດຢູ່ຮອດຄູ່ປະເທດຊາດຊະ
ກ່ອນ
13:11 ແຕ່ວ່າ ບັດຍາມເຂົານໍາພວກເຈົ້າອອກໄປມອບໄວ້ແນວນັ້ນ ຢ່າຄຶດຊິກຽມ
ແນວເວົ້າອີຫຍັງໄວ້ກ່ອນ ຢ່າຄຶດໜັກໃຈເລີຍເດີ້ ແຕ່ແນວເວົ້າທີ່ຕ້ອງການນັ້ນ ກໍຊິ
ໃຫ້ເຈົ້າໄວ້ໃນຍາມທີ່ຕ້ອງການນັ້ນພໍດີ ຍ້ອນວ່າຜູ້ທີ່ຊິເວົ້າໃນຍາມນັ້ນຊິບໍ່ແມ່ນ
ໂຕເຈົ້າເອງ ແຕ່ຊິເປັນ ພຣະວິນຍານ ຕ່າງຫາກທີ່ຊິເວົ້າ
13:12 ແລ້ວອ້າຍກໍຊິທໍລະຍົດນ້ອງເຖິງຕາຍ ແລ້ວພໍ່ກໍຊິມອບລູກໄວ້ ກັບລູກກໍຊິທໍ-
ລະຍົດພໍ່ແມ່ໃຫ້ເຖິງຕາຍ
13:13 ແລ້ວຄູ່ຄົນຊິຄຽດຊັງເຈົ້າຍ້ອນເຈົ້າເຫັນແກ່ນາມຂອງເຮົາ ແຕ່ຜູ້ທີ່ທົນໄດ້ຈົນ
ເຖິງທີ່ສຸດ ຜູ້ນັ້ນຊິລອດ

13:14 ແຕ່ບັດພວກເຈົ້າເຫັນເຈົ້າ ພະຍາມານ ສິ່ງທີ່ເປັນຕາຊັງນັ້ນມາ ຜູ້ຊຶ່ງເຮັດໃຫ້
ໂລກເກີດການອ້າງວ້າງບໍ່ປ່ຽວ ແມ່ນຜູ້ນັ້ນທີ່ ດານີເອນ ຜູ້ເປັນປາກເປັນສຽງໄດ້
ກ່າວໄວ້ເຖິງນັ້ນ ຕັ້ງໂຕຢືນຢູ່ໃນໜ້ອງທີ່ບໍ່ຄວນ" (ໃຫ້ຜູ້ອ່ານເຂົ້າໃຈເອົາເດີ້) "ບັດ
ຍາມນັ້ນກໍໃຫ້ຜູ້ທີ່ຢູ່ໃນແຄວ້ນ ຢູດາຍ ໜີອອກໄປໄວໆ ຂຶ້ນໄປລີ້ໃນພູເຂົາ
13:15 ຜູ້ທີ່ຢູ່ເທິງຫຼັງຄາເຮືອນ ຢ່າໃຫ້ລົງມາເກັບເຂົ້າຂອງໃດໆ ອອກຈາກເຮືອນ
ຂອງໂຕ
13:16 ແລ້ວຝ່າຍຜູ້ທີ່ຢູ່ຕາມທົ່ງໄຮ່ທົ່ງນາ ຢ່າໃຫ້ເມືອເອົາເສື້ອຜ້າຂອງໂຕ
13:17 ແຕ່ໃນມື້ນັ້ນ ໃຫ້ລະວັງພິນາດເດີ້ ຍິງຜູ້ມີທ້ອງ ກັບຍິງຜູ້ມີລູກອ່ອນກິນນົມຢູ່
13:18 ແລ້ວໃຫ້ພວກເຈົ້າອະທິຖານຂໍນຳພຣະເຈົ້າວ່າ ເຫດການແນວໝູ່ນີ້ຊິບໍ່ເກີດ
ຂຶ້ນໃນລະດູໜາວ
13:19 ຄືໃນຍາມນັ້ນ ຊິເກີດຄວາມທຸກຍາກລຳບາກແນວທີ່ບໍ່ເຄີຍມີມາກ່ອນ ຕັ້ງແຕ່
ພຣະເຈົ້າສ້າງໂລກມາຈົນເຖິງຍາມນີ້ ກັບຊິບໍ່ມີອີກເລີຍ
13:20 ແລ້ວວ່າ ຄັນອົງພຣະຜູ້ເປັນເຈົ້າບໍ່ອະນຸຍາດໃຫ້ມື້ພວກນັ້ນສັ້ນລົງ ຊິບໍ່ມີເນື້ອ-
ໜັງ *ຜູ້ໃດ* ລອດໄດ້ເລີຍ ແຕ່ວ່າເພິ່ນໄດ້ໃຫ້ມື້ພວກນັ້ນສັ້ນລົງ ຍ້ອນເຫັນແກ່ຜູ້ຖືກ
ເລືອກຊຶ່ງເພິ່ນໄດ້ເລືອກໄວ້
13:21 ກັບໃນຍາມນັ້ນ ຄັນຜູ້ໃດຊິບອກພວກເຈົ້າວ່າ 'ນີ້ແຫລະ ພຣະຄຣິດ ຢູ່ພີ້' ຫລື
'ນີ້ແຫລະ ຢູ່ພຸ້ນ' ຢ່າໄດ້ເຊື່ອເຂົາເລີຍ
13:22 ດ້ວຍວ່າ ຊິມີພຣະຄຣິດປອມ ກັບຜູ້ພະຍາກອນບໍ່ຈິງເກີດຂຶ້ນຫລາຍຄົນ ແລ້ວ
ພວກເຂົາຊິເຮັດເຄື່ອງໝາຍສຳຄັນອັນປອມ ກັບແນວມະຫັດສະຈັນອັນເປັນຕາ-
ງຶດປອມ ແລ້ວຄັນເປັນໄດ້ກໍຊິລໍ້ລວງແມ່ນແຕ່ຜູ້ທີ່ພຣະເຈົ້າເລືອກນັ້ນນຳ
13:23 ແຕ່ໃຫ້ພວກເຈົ້າລະວັງໃຫ້ດີເດີ້ ນີ້ແຫລະ ເຮົາໄດ້ບອກໝົດຄູ່ອັນຄູ່ແນວໃຫ້
ພວກເຈົ້າໄວ້ກ່ອນແລ້ວ
13:24 ແລ້ວຫລັງຈາກຍາມເວລາທຸກທໍລະມານອັນໃຫຍ່ຫລວງໄດ້ຜ່ານພົ້ນໄປແລ້ວ
ນັ້ນ ດວງຕະເວັນຊິມືດໄປ ກັບດວງເດືອນຊິບໍ່ສ່ອງແສງ
13:25 ແລ້ວດວງດາວຊິຕົກຈາກຟ້າສະຫວັນ ກັບອຳນາດໃດໆ ໃນຟ້າສະຫວັນຊິ
ຖືກສັ່ນສະເທືອນນຳ

13:26 ແລ້ວບັດຍາມນັ້ນຜູ້ຄົນທັງຫລາຍຊິໄດ້ເຫັນເຮົາ ຜູ້ເປັນບຸດມະນຸດ ລົງມາໃນ
ກຸ່ມເມກ ດ້ວຍລິດທານຸພາບກັບສະຫງ່າລາສີອັນໃຫຍ່ຫລວງ
13:27 ແລ້ວຫວ່າງໆນັ້ນເພິ່ນຊິໃຊ້ໝູ່ເທວະທູດຂອງເພິ່ນອອກໄປ ໃຫ້ໂຮມເອົາໝົດຄູ່
ຄົນທີ່ເພິ່ນໄດ້ເລືອກໄວ້ແລ້ວນັ້ນ ໃຫ້ອອກມາຈາກທິດທັງສີ່ ຕັ້ງແຕ່ສຸດປາຍຂອງ
ແຜ່ນດິນໂລກຈົນເຖິງທີ່ສຸດປາຍຂອງຂອບຟ້າ
13:28 ບັດນີ້ ໃຫ້ຮຽນຮູ້ຄຳປຽບທຽບເລື່ອງກົກໝາກເດື່ອເດີ້ ຄືບັດກິ່ງກ້ານຍັງອ່ອນ
ກັບແຕກໃບແລ້ວ ເຈົ້າກໍຮູ້ວ່າລະດູຮ້ອນໃກ້ຊິມາຮອດແລ້ວ
13:29 ຈັ່ງຊັ້ນເນາະ ໃນທຳນອງດຽວກັນ ບັດຍາມພວກເຈົ້າຊິເຫັນແນວໝູ່ນີ້ເປັນໄປ
ແລ້ວ ກໍໃຫ້ຮູ້ກັນວ່າເຫດການນັ້ນໃກ້ຊິມາເຖິງແລ້ວ ຄືໄດ້ມາຮອດໜ້າປະຕູແລ້ວ
13:30 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ຊົ່ວອາຍຸຄົນນີ້ຊິບໍ່ຜ່ານພົ້ນໄປຈົນກວ່າ
ໝົດຄູ່ອັນຄູ່ແນວນີ້ຊິເປັນໄປໄດ້
13:31 ທ້ອງຟ້າກັບແຜ່ນດິນໂລກກໍຊິຜ່ານພົ້ນລ່ວງໄປ ແຕ່ຖ້ອຍຄຳຂອງເຮົາຊິບໍ່ໄດ້
ຜ່ານພົ້ນລ່ວງໄປຈັກເທື່ອເລີຍ
13:32 ແຕ່ມື້ນັ້ນ ໂມງນັ້ນ *(ທີ່ມັນຊິເປັນໄປ)* ບໍ່ມີໃຜໄດ້ຮູ້ດອກ ພວກເທວະທູດໃນ
ສະຫວັນກໍບໍ່ຮູ້ ແມ່ນແຕ່ ພຣະບຸດ ເອງກໍບໍ່ຮູ້ ຮູ້ແຕ່ພຣະເຈົ້າຜູ້ເປັນພໍ່ເທົ່ານັ້ນ
13:33 ໃຫ້ຄອຍຖ້າລະວັງ ເບິ່ງດີໆ ກັບອະທິຖານເວົ້ານຳພຣະເຈົ້າຊະເດີ້ ຍ້ອນເຈົ້າ
ບໍ່ຮູ້ຈັກວ່າ ຍາມເວລານັ້ນຊິມາຮອດຕອນໃດ
13:34 ຄືວ່າເຮົາຜູ້ເປັນບຸດມະນຸດປຽບຄືເຈົ້າຂອງເຮືອນຜູ້ໜຶ່ງ ຜູ້ນັ້ນໄດ້ອອກຈາກ
ເຮືອນເດີນທາງອອກໄປໄກໆ ແລ້ວກ່ອນຊິໄປກໍໄດ້ມອບສິດທິອຳນາດໄວ້ໃຫ້
ພວກຜູ້ຮັບໃຊ້ຂອງເຂົາ ແລ້ວຝ່າຍພວກຄົນງານ ລາວ ກໍໄດ້ມອບໝາຍໜ້າທີ່ການ
ງານຂອງໂຕ ແລ້ວໄດ້ສັ່ງຍາມປະຕູໃຫ້ເບິ່ງແຍງເຮືອນຂອງເພິ່ນໄວ້
13:35 ຈັ່ງຊັ້ນ ຝ່າຍພວກເຈົ້າ ໃຫ້ຄອຍຖ້າລະວັງໃຫ້ດີເດີ້ ຍ້ອນພວກເຈົ້າບໍ່ຮູ້ວ່າເຈົ້າ
ຂອງເຮືອນຊິກັບມາຮອດຕອນໃດ ຊິມາຍາມຄ່ຳ ຫລືທ່ຽງຄືນ ຫລືຍາມໄກ່ຂັນ ຫລື
ຍາມມື້ເຊົ້າ
13:36 ຢ້ານວ່າ ເຈົ້າຂອງເຮືອນຊິມາຢ່າງກະທັນຫັນໂດຍບໍ່ບອກກັນໄວ້ກ່ອນ ແລ້ວ
ຫາລາງເທື່ອຊິໄດ້ຮັບພວກເຈົ້າພວມນອນຫລັບຢູ່

13:37 ແລ້ວແນວທີ່ເຮົາບອກພວກເຈົ້ານີ້ ເຮົາໄດ້ບອກໝົດຄູ່ຄົນຄືກັນ ວ່າໃຫ້ຄອຍ-
ຖ້າເບິ່ງໄວ້ດີໆ ເດີ້”

# ມາຣະໂກ ບົດທີ 14

14:1 ຍັງອີກສອງມື້ຊິເຖິງເທດສະການສະຫລອງມື້ທີ່ພຣະເຈົ້າກູ້ຊາດ ຢິວ ກັບ
ເທດສະການກິນເຂົ້າຈີ່ບໍ່ມີເຊື້ອຟູ ພວກຫົວໜ້າປະໂລຫິດກັບນັກທຳ ກໍຫາຊ່ອງທີ່
ຊິຈັບ ພຣະເຢຊູ ດ້ວຍກົນອຸບາຍ ຍ້ອນຕັ້ງໃຈຊິຂ້າເພິ່ນ
14:2 ແຕ່ພວກເຂົາເວົ້າກັນວ່າ “ຢ່າຫາກໍ່ເຮັດໃນມື້ລ້ຽງສະຫລອງນັ້ນເລີຍ ຢ້ານວ່າ
ພວກປະຊາຊົນຊິເກີດການ ສາລະວົນວຸ້ນວາຍ”
14:3 ແລ້ວໃນຍາມທີ່ ພຣະເຢຊູ ຢູ່ເຮືອນຂອງ ຊີໂມນ ຜູ້ເປັນພະຍາດຂີ້ທູດ ຢູ່ທີ່ໝູ່-
ບ້ານ ເບດທາເນຍ ບັດຍາມເພິ່ນພວມກິນຢູ່ພໍດີ ມີຍິງຜູ້ໜຶ່ງຖືກະປຸກຫີນຂາວ
ອ່ອນໃສ່ນ້ຳມັນຫອມນ້ຳມັນຫອມນາຣະດາອັນປະເສີດລ້ຳຄ່າ ມາຂາບມາເຝົ້າ
ເພິ່ນ ແລ້ວນາງກໍທຸບກະປຸກນັ້ນແຕກ ແລ້ວກໍລິນນ້ຳມັນຫອມນັ້ນລົງໃສ່ຫົວຂອງ
ເພິ່ນ
14:4 ແລ້ວມີຜູ້ລາງຄົນຢູ່ຫັ້ນບໍ່ພໍໃຈເວົ້າກັນວ່າ “ເປັນຫຍັງຈັ່ງເທນ້ຳມັນຫອມນີ້ຖິ້ມຊື່
ໆ
14:5 ຄືວ່ານ້ຳມັນຫອມນີ້ ຄັ່ນຂາຍກໍຄົງໄດ້ເງິນກວ່າສາມຮ້ອຍຫລຽນເດນາຣິອົນ
ແລ້ວຊິແຈກໃຫ້ຄົນຈົນກໍໄດ້” ແລ້ວເຂົາເລີຍຈົ່ມໃສ່ແມ່ຍິງນັ້ນ
14:6 ຝ່າຍ ພຣະເຢຊູ ເວົ້າວ່າ “ຢ່າວ່ານາງເລີຍ ກວນໃຈນາງຍ້ອນຫຍັງ ນາງໄດ້
ເຮັດການດີກັບເຮົາ
14:7 ຄືວ່າຄົນຍາກຈົນນັ້ນກໍມີຢູ່ນຳເຈົ້າຢູ່ສະເໝີ ແລ້ວພວກເຈົ້າຊິເຮັດການດີຊ່ອຍ
ເຂົາຍາມໃດກໍໄດ້ ແຕ່ສ່ວນເຮົານີ້ຊິບໍ່ໄດ້ຢູ່ນຳພວກເຈົ້າສະເໝີໄປ
14:8 ຄືນາງໄດ້ເຮັດຕາມທີ່ນາງສາມາດເຮັດໄດ້ ຄືນາງມາຫົດສົງໂຕຂອງເຮົາໄວ້
ກ່ອນເພື່ອງານສົບຂອງເຮົາ
14:9 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ໝ້ອງໃດໆ ທົ່ວໂລກຊຶ່ງຂ່າວປະເສີດນີ້ຊິ
ໄດ້ຮັບການປະກາດໄປ ແນວທີ່ນາງໄດ້ເຮັດໃຫ້ເຮົາກໍຊິລືໄປເປັນອະນຸສອນເຖິງ
ນາງພ້ອມນຳ”

14:10 ແລ້ວຝ່າຍ ຢູດາ ອິດສະກາຣິອົດ ເປັນຄົນໜຶ່ງໃນພວກລູກສິດສິບສອງຄົນ
ໄດ້ອອກໄປຫາພວກຫົວໜ້າປະໂລຫິດ ເພື່ອຊິທໍລະຍົດມອບ ພຣະເຢຊູ ໄວ້ໃຫ້
ເຂົາ
14:11 ແລ້ວບັດພວກເຂົາໄດ້ຍິນຈັ່ງຊັ້ນກໍດີໃຈ ກັບໄດ້ສັນຍາວ່າຊິໃຫ້ເງິນ ຢູດາ
ແລ້ວ ຢູດາ ກໍເລີຍຫາຊ່ອງທາງທີ່ຊິທໍລະຍົດມອບເພິ່ນໃຫ້ເຂົາ
14:12 ບັດມື້ທໍາອິດຂອງເທດສະການກິນເຂົ້າຈີ່ບໍ່ມີເຊື້ອຟູ ຊຶ່ງເປັນມື້ຊິຂ້າແກະນ້ອຍ
ສໍາລັບການຖວາຍສະຫລອງມື້ກູ້ຊາດ ຢິວ ນັ້ນ ພວກລູກສິດຂອງ ພຣະເຢຊູ ມາ
ຖາມເພິ່ນວ່າ "ທ່ານຢາກໃຫ້ພວກຜູ້ຂ້າຈັດກຽມການສະຫລອງກິນມື້ກູ້ຊາດ ຢິວ
ໃຫ້ກິນສະຫລອງຢູ່ໃສ"
14:13 ພຣະເຢຊູ ໄດ້ໃຊ້ລູກສິດສອງຄົນໄປ ສັ່ງເຂົາວ່າ "ໃຫ້ເຂົ້າໄປໃນເມືອງ ແລ້ວ
ຊິມີຜູ້ຊາຍຄົນໜຶ່ງ ເອົາໝໍ້ດິນໃສ່ນໍ້າມາຫາເຈົ້າ ໃຫ້ຕາມຄົນນັ້ນໄປເດີ້
14:14 ແລ້ວເຂົາຊິເຂົ້າໄປເຮືອນໃດ ໃຫ້ພວກເຈົ້າບອກເຈົ້າຂອງເຮືອນນັ້ນວ່າ ພຣະ-
ອາຈານຂອງພວກເຮົາໃຫ້ຖາມວ່າ 'ຫ້ອງພັກແຂກທີ່ເຮົາຊິກິນສະຫລອງມື້ກູ້ຊາດ
ຢິວ ຮ່ວມກັນກັບລູກສິດມີຢູ່ໃສ'
14:15 ແລ້ວເຈົ້າຂອງເຮືອນຊິພາເຈົ້າຂຶ້ນໄປເບິ່ງຫ້ອງໃຫຍ່ທີ່ຕົກແຕ່ງໄວ້ຢ່າງດີແລ້ວ
ຢູ່ຊັ້ນເທິງ ຫ້ອງນັ້ນເນາະ ໃຫ້ພວກເຈົ້າຈັດກຽມການໄວ້ສໍາລັບພວກເຮົາເດີ້"
14:16 ແລ້ວລູກສິດສອງຄົນນັ້ນຈັ່ງອອກຍ່າງເຂົ້າໄປໃນເມືອງ ແລ້ວເຫັນວ່າໄດ້ເປັນ
ໄປຄືກັນກັບເພິ່ນໄດ້ເວົ້າກັບເຂົາ ເຂົາຈັ່ງຈັດກຽມຫ້ອງນັ້ນໄວ້ຮຽບຮ້ອຍໃຫ້ສະ-
ຫລອງເທດສະການມື້ກູ້ຊາດ ຢິວ
14:17 ບັດຮອດຄໍ່າແລ້ວ ພຣະເຢຊູ ໄດ້ມາກັບລູກສິດສິບສອງຄົນນັ້ນ
14:18 ແລ້ວບັດພວມກິນສະຫລອງຢູ່ກັບລູກສິດ ພຣະເຢຊູ ເວົ້າວ່າ "ເຮົາຊິບອກ
ຄວາມຈິງໃຫ້ພວກເຈົ້າເດີ້ ມີຄົນໜຶ່ງໃນພວກເຈົ້າທີ່ພວມກິນອາຫານຢູ່ກັບເຮົານີ້
ຜູ້ນັ້ນເນາະຊິທໍລະຍົດໃສ່ເຮົາ"
14:19 ແລ້ວຝ່າຍພວກລູກສິດກໍເກີດເປັນທຸກແລ້ວບັດນີ້ ຕ່າງຈັ່ງຖາມເພິ່ນແຕ່ລະ
ຄົນວ່າ "ແມ່ນຜູ້ຂ້າບໍ້" ແລ້ວອີກຄົນໜຶ່ງຖາມວ່າ "ແມ່ນຜູ້ຂ້າຊະບໍ້"

14:20 ແລ້ວ ພຣະເຢຊູ ໄດ້ຕອບເຂົາວ່າ "ມັນເປັນຜູ້ໜຶ່ງໃນລູກສິດສິບສອງຄົນນີ້ ຄື
ເປັນຜູ້ຈີ້ມໃນຈານດຽວກັນກັບເຮົານີ້ເນາະ
14:21 ຄື ສຳລັບເຮົາຜູ້ເປັນບຸດມະນຸດນັ້ນ ມັນຊິຕ້ອງເປັນໄປຕາມຄຳທີ່ຂຽນໄວ້ຢູ່
ແລ້ວ ແຕ່ໃຫ້ລະວັງພິນາດເດີ້ ຜູ້ທີ່ທໍລະຍົດເຮົາຜູ້ເປັນບຸດມະນຸດ ຄືຄັ່ນຜູ້ນັ້ນບໍ່ໄດ້
ເກີດມາເລີຍ ກໍຊິດີກວ່າສຳລັບເຂົາ"
14:22 ແລ້ວຫວ່າງພວກເຂົາພວມກິນສະຫລອງນັ້ນ ພຣະເຢຊູ ກໍຫຍິບເອົາເຂົ້າຈີ່
ຂຶ້ນມາ ແລ້ວຂອບຄຸນ ແລ້ວຈັ່ງບິໃຫ້ພວກລູກສິດເວົ້າວ່າ "ໃຫ້ຮັບກິນເດີ້ ອັນນີ້-
ແມ່ນຄືກາຍຂອງເຮົາ"
14:23 ແລ້ວເພິ່ນຈັ່ງຫຍິບຖ້ວຍ ຂອບຄຸນ ແລ້ວໃຫ້ເຂົາ ເຂົາກໍຮັບໄປດື່ມຄູ່ຄົນ
14:24 ແລ້ວເພິ່ນເວົ້າກັບເຂົາອີກວ່າ "ໃຫ້ຮັບດື່ມເດີ້ ອັນນີ້ແມ່ນຄືເລືອດຂອງເຮົາ ທີ່
ເປັນພັນທະສັນຍາໃໝ່ ຊຶ່ງຕ້ອງຫລັ່ງໄຫລອອກເພື່ອຄົນຫລວງຫລາຍ
14:25 ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້ ເຮົາຊິບໍ່ໄດ້ດື່ມນ້ຳໝາກເຄືອອະງຸ່ນນີ້
ຕໍ່ໄປອີກ ຈົນຮອດມື້ນັ້ນຢູ່ຂ້າງໜ້າພູ້ນ ຄືມື້ທີ່ເຮົາຊິດື່ມໃໝ່ໃນລາຊະອານາຈັກ-
ຂອງພຣະເຈົ້ານັ້ນ"
14:26 ບັດຮ້ອງເພງສັນລະເສີນແລ້ວ ພຣະເຢຊູ ກັບພວກລູກສິດກໍພາກັນອອກໄປ
ຍັງພູເຂົາໝາກກອກເທດ
14:27 ແລ້ວ ພຣະເຢຊູ ເວົ້າກັບພວກລູກສິດວ່າ "ພວກເຈົ້າຊິສະດຸດໃຈຍ້ອນເຮົາໃນ
ຄືນນີ້ເອງ ຕາມທີ່ມີຄຳຂຽນໄວ້ວ່າ 'ເຮົາຊິຟາດຊິຕີຜູ້ລ້ຽງແກະໃຫ້ແຫລກ ແລ້ວ
ແກະຝູງນັ້ນຊິກະຈັກກະຈາຍອອກໄປ'
14:28 ແຕ່ບັດເຮົາເປັນຂຶ້ນມາຈາກຕາຍແລ້ວ ເຮົາຊິໄປຍັງແຄວ້ນ ກາລີເລ ກ່ອນ
ເຈົ້າ"
14:29 ບັດນີ້ ເປໂຕ ບອກເພິ່ນວ່າ "ແມ່ນແຕ່ໝົດຄູ່ຄົນຊິສະດຸດໃຈຫລົງໄປ ຜູ້ຂ້າຊິບໍ່
ສະດຸດເລີຍ"
14:30 ແລ້ວ ພຣະເຢຊູ ຈັ່ງເວົ້າກັບເຂົາວ່າ "ເຮົາຊິບອກຄວາມຈິງໃຫ້ພວກເຈົ້າເດີ້
ໃນມື້ນີ້ ຄືຄືນນີ້ເອງ ກ່ອນໄກ່ຊິຂັນສອງເທື່ອ ເຈົ້າຊິປະຕິເສດເຮົາສາມເທື່ອ"

14:31 ແຕ່ ເປໂຕ ເລີຍສາບານຢ່າງຮ້າຍແຮງເຂົ້າໄປອີກວ່າ "ເຖິງແມ່ນຜູ້ຂ້າຊິຕ້ອງ
ຕາຍກັບທ່ານ ຜູ້ຂ້າກໍຊິບໍ່ປະຕິເສດທ່ານເລີຍ" ພວກລູກສິດກໍເວົ້າຄືກັນໝົດຄູ່ຄືນ
14:32 ແລ້ວ ພຣະເຢຊູ ກັບພວກລູກສິດມາຍັງໜ້ອງໜຶ່ງຊື່ ເຄັດເຊມາເນ ແລ້ວເພິ່ນ
ເວົ້າກັບລູກສິດຂອງເພິ່ນວ່າ "ໃຫ້ນັ່ງຢູ່ນີ້ໄວ້ເດີ້ ບັດຍາມເຮົາອອກໄປອະທິຖານ
ເວົ້ານຳພຣະເຈົ້າ"
14:33 ແລ້ວເພິ່ນກໍພາ ເປໂຕ ຢາໂກໂບ ກັບ ໂຢຮັນ ໄປນຳ ຮອດແລ້ວເພິ່ນກໍເກີດ
ການປັ່ນປ່ວນໜັກໃຈຫລາຍຂະໜາດ
14:34 ຈັ່ງເວົ້າກັບພວກລູກສິດວ່າ "ໃຈເຮົາເປັນທຸກເກືອບຊິຕາຍ ໃຫ້ຖ້າຄອຍຖ້າ
ເຝົ້າເບິ່ງຢູ່ນີ້ເດີ້"
14:35 ແລ້ວເພິ່ນໄດ້ຍ່າງອອກໄປອີກໜ່ອຍໜຶ່ງ ລົ້ມລົງທີ່ດິນອະທິຖານເວົ້ານຳ
ພຣະເຈົ້າ ແລ້ວເພິ່ນໄດ້ຂໍວ່າ ຄັ່ນເປັນໄປຂໍໃຫ້ໂມງທີ່ຊິຮອດຜ່ານພົ້ນໄປຈາກເພິ່ນ
14:36 ແລ້ວເພິ່ນໄດ້ເວົ້າອີກວ່າ " ອັບບາ ໆ ພຣະເຈົ້າຜູ້ເປັນພໍ່ເຈົ້າຂ້າເອີຍ ພໍ່ສາ-
ມາດເຮັດໝົດຄູ່ແນວໄດ້ ຂໍເອົາຈອກນີ້ອອກຈາກຜູ້ຂ້າໄປເຖີດ ແຕ່ວ່າຢ່າໃຫ້ເປັນ
ຕາມໃຈຂອງຜູ້ຂ້າ ແຕ່ໃຫ້ເປັນໄປຕາມພຣະປະສົງຂອງພໍ່ເລີຍ"
14:37 ແລ້ວບັດ ພຣະເຢຊູ ກັບມາ ໄດ້ຮັບພວກລູກສິດນອນຫລັບຢູ່ ເລີຍເວົ້າກັບ
ເປໂຕ ວ່າ " ຊີໂມນ ເປໂຕ ເອີຍ ພວກເຈົ້າຄືນອນຫລັບກັນຕີ້ ຊິຄອຍຖ້າເຝົ້າຢູ່
ໂມງດຽວບໍ່ໄດ້ບໍ້
14:38 ໃຫ້ພວກເຈົ້າຄວນລະວັງ ອະທິຖານເວົ້ານຳພຣະເຈົ້າຊະເດີ້ ເພື່ອເຈົ້າຊິບໍ່ເຂົ້າ
ສູ່ການທົດລອງເດີ້ ຈິດໃຈພ້ອມແລ້ວກໍແມ່ນຢູ່ ແຕ່ຝ່າຍເນື້ອໜັງກໍອ່ອນກຳລັງ"
14:39 ແລ້ວເພິ່ນຈັ່ງອອກໄປອະທິຖານເວົ້ານຳພຣະເຈົ້າອີກເທື່ອໜຶ່ງ ໄດ້ເວົ້າເປັນ
ຄຳເກົ່າອີກ
14:40 ແລ້ວບັດເພິ່ນກັບມາ ໄດ້ຮັບລູກສິດນອນຫລັບຢູ່ຄືເກົ່າ (ຍ້ອນວ່າໜັງຕາເຂົາ
ໜັກຈັ່ງມືນບໍ່ຂຶ້ນ) ຝ່າຍພວກເຂົາບໍ່ຮູ້ຈັກຄວາມຊິຕອບເພິ່ນ
14:41 ແລ້ວບັດເພິ່ນກັບໄປເທື່ອທີ່ສາມ ຈັ່ງເວົ້າກັບເຂົາວ່າ "ທັນທີ ໃຫ້ພວກເຈົ້າ
ນອນຕໍ່ໄປໃຫ້ມັນຫາຍເໝື່ອຍຊະ ນີ້ແຫລະ ພໍແລ້ວ ຄືໂມງນັ້ນໄດ້ມາຮອດມາເຖິງ
ແລ້ວ ຊຶ່ງເຮົາຜູ້ເປັນບຸດມະນຸດຊິຕ້ອງຖືກທໍລະຍົດໃຫ້ຕົກຢູ່ໃນມືຂອງຄົນບາບ

14:42 ລຸກຂຶ້ນໄປກັນເຖີ ນີ້ແຫລະ ຜູ້ທີ່ຊິທໍລະຍົດເຮົານັ້ນໃກ້ຊິມາຮອດແລ້ວ”
14:43 ແລ້ວຫວ່າງນັ້ນ ພຣະເຢຊູ ເວົ້າຍັງບໍ່ທັນຂາດຄໍາ ພໍດີ ຢູດາ ຊຶ່ງເປັນຄົນໜຶ່ງ
ໃນພວກລູກສິດສິບສອງຄົນນັ້ນ ກັບມີຄົນຫລວງຫລາຍຂະໜາດຖືດາບຖືໄມ້ຕະ-
ບອງ ໄດ້ມາຈາກພວກຫົວໜ້າປະໂລຫິດ ກັບນັກທໍາພ້ອມພວກຜູ້ຫລັກຜູ້ໃຫຍ່
14:44 ແລ້ວຜູ້ທີ່ຊິທໍລະຍົດເພິ່ນນັ້ນ ໄດ້ຕົກລົງກັບພວກນັ້ນມາກ່ອນແລ້ວຊິໃຫ້ສັນ-
ຍານວ່າ “ຜູ້ໃດທີ່ເຮົາຈູບແກ້ມ ແມ່ນຜູ້ນັ້ນເນາະ ໃຫ້ຈັບກຸມເຂົາໄວ້ໃຫ້ດີໆ ແລ້ວຈັ່ງ
ນໍາອອກໄປເລີຍ”
14:45 ແລ້ວພໍ ຢູດາ ມາເຖິງ ເຂົາຍ່າງກົງເຂົ້າມາຫາ ພຣະເຢຊູ ເວົ້າວ່າ “ອາຈານ
ເຈົ້າຂ້າໆ” ແລ້ວຈັ່ງຈູບແກ້ມເພິ່ນ
14:46 ແລ້ວຄົນພວກນັ້ນໄດ້ຈັບກຸມເພິ່ນເອົາອອກໄປ
14:47 ແລ້ວມີລູກສິດຄົນໜຶ່ງທີ່ຢືນຢູ່ໃກ້ໆ ໄດ້ຊັກດາບອອກ ແຂ້ວຖືກຫູຂອງຜູ້ຮັບ-
ໃຊ້ຂອງມະຫາປະໂລຫິດ ຂາດອອກ
14:48 ແລ້ວ ພຣະເຢຊູ ຈັ່ງຖາມພວກມານັ້ນວ່າ “ພວກເຈົ້າເບິ່ງເຮົາວ່າເປັນໂຈນບໍ້
ຈັ່ງຖືດາບ ຖືຕະບອງອອກມາຈັບເຮົາ
14:49 ເຮົາໄດ້ສອນຢູ່ໃນພຣະວິຫານຄູ່ມື້ຕອນພວກເຈົ້າຢູ່ ແຕ່ຫວ່າງນັ້ນພວກເຈົ້າບໍ່
ໄດ້ຈັບເຮົາ ແຕ່ມັນຊິຕ້ອງສໍາເລັດຕາມ ພຣະຄໍາ ”
14:50 ແລ້ວລູກສິດໝົດຄູ່ຄົນໄດ້ປະເພິ່ນໄວ້ກັບພວກນັ້ນ ແລ້ວພາກັນໜີໄປ
14:51 ແລ້ວມີຜູ້ຊາຍໜຸ່ມຄົນໜຶ່ງ ບໍ່ໃສ່ເສື້ອຜ້າ ມີແຕ່ຫົ່ມຜ້າປ່ານຄຸມໂຕໄວ້ ຕິດຕາມ
ພຣະເຢຊູ ໄປ ແລ້ວພວກໜຸ່ມໆ ໄດ້ຈັບດຶງເຂົາໄວ້
14:52 ແຕ່ເຂົາໄດ້ປະຜ້າປ່ານຜືນນັ້ນ ເຫລືອແຕ່ໂຕໜີອອກໄປ
14:53 ບັດນີ້ພວກນັ້ນໄດ້ນໍາ ພຣະເຢຊູ ໄປຫາມະຫາປະໂລຫິດ ແລ້ວມີພວກຫົວ-
ໜ້າປະໂລຫິດ ພວກຜູ້ຫລັກຜູ້ໃຫຍ່ ກັບນັກທໍາພວມຕຸ້ມໂຮມກັນຢູ່ຫັ້ນ
14:54 ແລ້ວຝ່າຍ ເປໂຕ ກໍໄດ້ຕິດຕາມ ພຣະເຢຊູ ໄປຢູ່ຫ່າງໆ ຈົນເຂົ້າໄປເຖິງວັງ
ຂອງມະຫາປະໂລຫິດ ແລ້ວໄດ້ນັ່ງອົບອຸ່ນຢູ່ໄຟກັບພວກຄົນໃຊ້
14:55 ແລ້ວພວກຫົວໜ້າປະໂລຫິດ ກັບພວກສະມາຊິກສະພາ ໄດ້ຫາຂໍ້ພະຍານ
ຫຼັກຖານຕູ່ໃສ່ ພຣະເຢຊູ ເພື່ອຈັບຜິດປະຫານເພິ່ນໄດ້ ແຕ່ຫາຫຼັກຖານບໍ່ໄດ້ເລີຍ

14:56 ຄືວ່າມີຫລາຍຄົນໄດ້ເວົ້າເປັນພະຍານບໍ່ຈິງໃສ່ເພິ່ນ ແຕ່ຄຳເວົ້າຂອງເຂົານັ້ນ
ບໍ່ກົງກັນ
14:57 ແລ້ວຈັ່ງມີຜູ້ລາງຄົນຢືນຂຶ້ນ ເວົ້າເປັນຄວາມບໍ່ຈິງກ່າວຫາເພິ່ນວ່າ
14:58 "ພວກເຮົາໄດ້ຍິນຄົນນີ້ວ່າ 'ເຮົາຊິທຳລາຍພຣະວິຫານນີ້ທີ່ສ້າງໄວ້ດ້ວຍມືຄົນ
ແລ້ວໃນມື້ທີ່ສາມ ເຮົາຊິສ້າງອີກວິຫານໜຶ່ງຂຶ້ນ ຊຶ່ງບໍ່ໄດ້ສ້າງດ້ວຍມືຂອງຄົນ
ເລີຍ'"
14:59 ແຕ່ຄຳພະຍານຂອງຄົນພວກນັ້ນ ກໍຍັງແຕກຕ່າງບໍ່ກົງກັນ
14:60 ແລ້ວບັດນີ້ ມະຫາປະໂລຫິດຈັ່ງລຸກຂຶ້ນຢືນໃນໝູ່ພວກທີ່ຊຸມນຸມຖາມ ພຣະ-
ເຢຊູ ວ່າ "ເຈົ້າຄືບໍ່ຕອບອີຫຍັງແໜ່ບໍ້ ແມ່ນອີຫຍັງທີ່ພວກນີ້ໄດ້ກ່າວຫາເຈົ້າ"
14:61 ແຕ່ເພິ່ນນິ່ງຢູ່ ບໍ່ໄດ້ຕອບໂຕ້ອີຫຍັງເລີຍ ແລ້ວອີກເທື່ອໜຶ່ງ ມະຫາປະໂລຫິດ
ຈັ່ງຖາມ ພຣະເຢຊູ ວ່າ "ແມ່ນຕີ້ ທີ່ເຈົ້າເປັນ ພຣະຄຣິດ ພຣະບຸດ ຂອງພຣະເຈົ້າຜູ້
ບໍຣິສຸກນັ້ນບໍ້"
14:62 ແລ້ວ ພຣະເຢຊູ ຕອບວ່າ "ເຮົາໄດ້ເປັນ ແລ້ວພວກເຈົ້າຊິໄດ້ເຫັນເຮົາຜູ້ເປັນ
ບຸດມະນຸດນັ້ນ ນັ່ງທາງຂວາຂອງຜູ້ເພິ່ນມີລິດທານຸພາບ ກັບມາໃນເມກຈາກຟ້າ-
ສະຫວັນ"
14:63 ບັດນີ້ ມະຫາປະໂລຫິດ ຈັ່ງຈີກເສື້ອຂອງໂຕ ແລ້ວເວົ້າວ່າ "ເຮົາຄືຊິບໍ່ຕ້ອງ-
ການພະຍານຫູ້ກຖາມອີຫຍັງອີກແລ້ວເນາະ
14:64 ພວກເຈົ້າໄດ້ຍິນເຂົາເວົ້າໝິ່ນປະມາດພຣະເຈົ້າແລ້ວ ພວກເຈົ້າຄຶດເຫັນຈັ່ງ
ໃດ" ແລ້ວໝົດຄູ່ຄົນກໍເຫັນນຳກັນວ່າ ຄວນຊິມີໂທດເຖິງຕາຍ
14:65 ແລ້ວຜູ້ລາງຄົນກໍຖົ່ມນ້ຳລາຍໃສ່ເພິ່ນ ເອົາຜ້າມັດປິດຕາເພິ່ນ ຟາດຕີເພິ່ນ
ແລ້ວເວົ້າໃສ່ເພິ່ນວ່າ "ໃຫ້ພະຍາກອນເບິ່ງ" ແລ້ວພວກຄົນໃຊ້ເອົາຝ່າມືຕົບເພິ່ນ
14:66 ແລ້ວຝ່າຍ ເປໂຕ ນັ້ນ ລາວກໍຢູ່ໃນລານນອກຂອງວັງຢູ່ທາງລຸມນັ້ນ ມີແມ່ຍິງ
ຄົນໜຶ່ງໃນພວກຄົນໃຊ້ຂອງມະຫາປະໂລຫິດໄດ້ຍ່າງມາ
14:67 ບັດເຫັນ ເປໂຕ ອິບອຸ່ນຢູ່ໄຟເຂົາຈ້ອງເບິ່ງ ແລ້ວເວົ້າວ່າ "ແມ່ນເຈົ້ານີ້ເນາະ
ໄດ້ຢູ່ກັບ ເຢຊູ ຊາວ ນາຊາເຣັດ ນັ້ນ"

14:68 ແຕ່ ເປໂຕ ປະຕິເສດວ່າ "ທີ່ເຈົ້າວ່ານັ້ນເຮົາບໍ່ຮູ້ເລື່ອງ ກັບບໍ່ເຂົ້າໃຈ" ແລ້ວ ເປ-
ໂຕ ຈັ່ງອອກໄປເຂົ້າລະບຽງໜ້າຂອງວັງ ແລ້ວໄກ່ກໍຂັນພໍດີ
14:69 ແລ້ວອີກເທື່ອໜຶ່ງຄົນໃຊ້ອີກຄົນໜຶ່ງໄດ້ເຫັນ ເປໂຕ ບອກກັບຄົນທີ່ຢືນຢູ່ຫັ້ນ
ວ່າ "ຄົນນີ້ເນາະ ເປັນຜູ້ໜຶ່ງໃນພວກເຂົາ"
14:70 ແລ້ວ ເປໂຕ ກໍປະຕິເສດອີກ ແລ້ວຢູ່ມາອີກຈັກນ້ອຍ ພວກຄົນທີ່ຢືນຢູ່ຫັ້ນໄດ້
ເວົ້າກັບ ເປໂຕ ວ່າ "ເຈົ້ານັ້ນແລ້ວ ເປັນຄົນໜຶ່ງໃນພວກເຂົາຄັກແນ່ ຄືວ່າເຈົ້າເປັນ
ຊາວ ກາລິເລ ແລ້ວສຳນຽງເວົ້າຂອງເຈົ້າກໍສໍ່ໄປທາງດຽວກັນນຳ"
14:71 ແຕ່ ເປໂຕ ສະບົດສາບານ ດ່າເຂົາວ່າ "ຄົນທີ່ເຈົ້າວ່ານັ້ນ ກູບໍ່ຮູ້ຈັກມັນດອກ"
14:72 ແລ້ວພໍດີໄກ່ກໍຂັນເປັນເທື່ອສອງ ເປໂຕ ຈັ່ງຄຶດຊອດເຖິງຄຳທີ່ ພຣະເຢຊູ ເວົ້າ
ໄວ້ກັບເຂົາວ່າ "ກ່ອນໄກ່ຂັນສອງເທື່ອ ເຈົ້າຊິປະຕິເສດເຮົາສາມເທື່ອ" ບັດ ເປໂຕ
ຫວົນຄຶດຂຶ້ນໄດ້ກໍຮ້ອງໄຫ້ຢ່າງໃຫຍ່

## ມາຣະໂກ ບົດທີ 15

15:1 ພໍມື້ອື່ນເຊົ້າມາ ພວກຫົວໜ້າປະໂລຫິດ ໄດ້ປຶກສາກັນກັບພວກຜູ້ຫລັກຜູ້ໃຫຍ່
ກັບນັກທຳພ້ອມພວກສະມາຊິກສະພາ ແລ້ວມັດ ພຣະເຢຊູ ໄວ້ຈູງລາກໄປມອບ
ໄວ້ໃຫ້ນາຍ ປີລາດ
15:2 ແລ້ວນາຍ ປີລາດ ເລີຍຖາມ ພຣະເຢຊູ ວ່າ "ເຈົ້າເປັນກະສັດຂອງຊາດ ຢິວ ບໍ້"
ເພິ່ນຕອບວ່າ "ເປັນຄືທ່ານເວົ້ານີ້ເນາະ"
15:3 ແລ້ວຝ່າຍພວກຫົວໜ້າປະໂລຫິດ ໄດ້ຟ້ອງຮ້ອງໃສ່ໂທດເພິ່ນເປັນຫລາຍອັນ
ຫລາຍແນວ ແຕ່ເພິ່ນບໍ່ໄດ້ຕອບອີຫຍັງເລີຍ
15:4 ແລ້ວນາຍ ປີລາດ ຖາມເພິ່ນອີກວ່າ "ເປັນອີຫຍັງເຈົ້າຄືບໍ່ຕອບ ນີ້ແຫລະ
ພວກເຂົາກ່າວຫາເຈົ້າ ເປັນຫລາຍອັນຫລາຍແນວ"
15:5 ແຕ່ ພຣະເຢຊູ ຍັງບໍ່ໄດ້ຕອບອີຫຍັງ ນາຍ ປີລາດ ກໍແປກໃຈເປັນຕາງຶດ
15:6 ບັດນີ້ ຕາມປະເພນີໃນເທດສະການລ້ຽງສະຫລອງນັ້ນ ນາຍ ປີລາດ ເຄີຍປ່ອຍ
ນັກໂທດຄົນໜຶ່ງໃຫ້ປະຊາຊົນຕາມທີ່ເຂົາຮ້ອງຂໍ
15:7 ແລ້ວຕອນນັ້ນ ມີນັກໂທດຄົນໜຶ່ງຊື່ ບາຣາບາ ຊຶ່ງຜູ້ນີ້ຖືກລ່າມໂສ້ໄວ້ກັບໝູ່
ພວກຄົນກະບົດ ຜູ້ທີ່ໄດ້ຂ້າຄົນໃນການກະບົດນັ້ນ

15:8 ແລ້ວພວກຄົນຫລວງຫລາຍຢູ່ຫັ້ນພາກັນຮ້ອງສຽງດັ່ງ ຂໍນາຍ ປີລາດ ໃຫ້ເຮັດ
ຕາມປະເພນີທີ່ ລາວ ເຄີຍເຮັດໃຫ້ເຂົານັ້ນ
15:9 ແຕ່ນາຍ ປີລາດ ໄດ້ຖາມເຂົາວ່າ "ພວກເຈົ້າຢາກຊິໃຫ້ເຮົາປ່ອຍກະສັດຂອງ
ຊາດ ຢິວ ໃຫ້ບໍ້"
15:10 ຄື ລາວ ຮູ້ຢູ່ແລ້ວວ່າ ພວກຫົວໜ້າປະໂລຫິດໄດ້ມອບ ພຣະເຢຊູ ໄວ້ຍ້ອນເຂົາ
ອິດສາເພິ່ນ
15:11 ແຕ່ພວກຫົວໜ້າປະໂລຫິດຍຸຍົງພວກປະຊາຊົນຢູ່ຫັ້ນ ໃຫ້ຂໍນາຍ ປີລາດ
ປ່ອຍນັກໂທດ ບາຣາບາ ແທນ ພຣະເຢຊູ
15:12 ແລ້ວນາຍ ປີລາດ ໄດ້ຖາມເຂົາອີກວ່າ "ພວກເຈົ້າຊິໃຫ້ເຮົາເຮັດຈັ່ງໃດກັບຄົນ
ນີ້ ຊຶ່ງພວກເຈົ້າເອີ້ນວ່າກະສັດຂອງຊາດ ຢິວ "
15:13 ບັດນີ້ ພວກປະຊາຊົນຮ້ອງແຮງສຽງດັ່ງອີກວ່າ "ຕອກຄຶງເຂົາຊະທີ່ໄມ້ກາງ-
ແຂນ ໂລດ "
15:14 ບັດນີ້ ນາຍ ປີລາດ ຖາມພວກເຂົາວ່າ "ໃຫ້ຕອກຄຶງເພິ່ນຍ້ອນຫຍັງ ເພິ່ນໄດ້
ເຮັດຜິດອີຫຍັງ" ແຕ່ພວກຄົນຢູ່ຫັ້ນກໍແຮງຮ້ອງກັນວ່າ "ຕອກຄຶງເຂົາ ໂລດ ໆ"
15:15 ແລ້ວນາຍ ປີລາດ ຈັ່ງປ່ອຍນັກໂທດ ບາຣາບາ ໃຫ້ເຂົາ ຍ້ອນຢາກເອົາໃຈ
ພວກຄົນຢູ່ຫັ້ນ ກັບພໍໄດ້ສັ່ງໃຫ້ຂ້ຽນຕີ ພຣະເຢຊູ ແລ້ວ ກໍມອບເພິ່ນໃຫ້ໄປຕອກຄຶງ
ໄວ້ທີ່ໄມ້ກາງແຂນ
15:16 ແລ້ວພວກທະຫານ ໂຣມ ເລີຍນຳເອົາ ພຣະເຢຊູ ອອກໄປ ເຂົ້າໄປຂ້າງໃນຕຳ
ໜັກ *ຂອງຜູ້ບັນຊາທະຫານ ໂຣມ* ທີ່ເອີ້ນກັນວ່າສານ ປະໄຣໂຕຣຽມ ແລ້ວເອີ້ນ
ພວກທະຫານທັງກອງມາໂຮມກັນ
15:17 ແລ້ວພວກທະຫານນັ້ນກໍຫາເອົາເສື້ອສີມ່ວງມາໃສ່ ພຣະເຢຊູ ແລ້ວເອົາໜ
າມມາສານເປັນມົງກຸດ ສວມໃສ່ຫົວຂອງເພິ່ນນຳ
15:18 ແລ້ວແກ້ງຄຳນັບເພິ່ນ ເວົ້າວ່າ "ກະສັດຂອງຊາດ ຢິວ ເຈົ້າຂ້າ ຂໍຊົງພຣະຈະ-
ເລີນເຖີ້ນ"
15:19 ແລ້ວເຂົາໄດ້ເອົາໄມ້ອໍ້ຟາດຕີຫົວເພິ່ນ ກັບໄດ້ຖົ່ມນ້ຳລາຍໃສ່ເພິ່ນ ແລ້ວຄຸກ-
ເຂົ່າລົງແກ້ງເຄົາລົບບູຊາເພິ່ນ

15:20 ບັດເຍາະເຍີ້ຍເພິ່ນພໍແຮງແລ້ວ ເຂົາເອົາເສື້ອສີມ່ວງນັ້ນອອກ ແລ້ວເອົາເສື້ອ
ຄຸມຍາວຂອງເພິ່ນສວມໃສ່ໃຫ້ ແລ້ວໄດ້ນຳເພິ່ນອອກໄປເພື່ອຊິຕອກຄຶງທີ່ໄມ້-
ກາງແຂນ
15:21 ແລ້ວມີຄົນໜຶ່ງຊື່ ຊີໂມນ ເປັນຊາວ ກີເຣເນ ເປັນພໍ່ຂອງ ອາເລັກຊັນໂດ
ກັບ ຣູໂຟ ພວມຍ່າງມາຈາກທາງຊົນນະບົດຕາມທາງນັ້ນມາ ພວກທະຫານຈັ່ງ
ເກນ ຊີໂມນ ໃຫ້ແບກໄມ້ກາງແຂນຂອງເພິ່ນ
15:22 ແລ້ວພວກທະຫານພາ ພຣະເຢຊູ ມາເຖິງໜ້ອງໜຶ່ງຊື່ ໂຄລະໂຄທາ ແປວ່າ
ກະໂຫລຫົວ
15:23 ແລ້ວທະຫານໄດ້ເອົາເຫລົ້າອະງຸ່ນປົນກັບຢາງໄມ້ຫອມໃຫ້ ພຣະເຢຊູ ກິນ ແຕ່
ເພິ່ນບໍ່ຮັບກິນ
15:24 ແລ້ວບັດທະຫານຕອກຄຶງເພິ່ນທີ່ໄມ້ກາງແຂນແລ້ວ ເຂົາກໍເອົາເສື້ອຄຸມຍາວ
ເພິ່ນຈັບສະຫລາກແບ່ງປັນກັນອອກໄປແຕ່ລະຄົນຕາມຫັ້ນ
15:25 ບັດທະຫານຕອກຄຶງ ພຣະເຢຊູ ໄວ້ນັ້ນເປັນເວລາສາມໂມງເຊົ້າ
15:26 ແລ້ວມີທາຂຽນຂໍ້ຫາທີ່ລົງໂທດເພິ່ນ ໄວ້ເທິງຫົວວ່າ “ກະສັດຂອງຊາດ ຢິວ ”
15:27 ແລ້ວນອກຈາກ ພຣະເຢຊູ ກໍມີໂຈນສອງຄົນຕອກຄຶງໄວ້ພ້ອມກັບເພິ່ນ ທາງ
ຂວາຄົນໜຶ່ງ ກັບທາງຊ້າຍອີກຄົນໜຶ່ງ
15:28 ແລ້ວຄຳພະຍາກອນນັ້ນທີ່ມີຂຽນໄວ້ໃນ ພຣະຄຳ ໄດ້ສຳເລັດແລ້ວ ທີ່ວ່າ
“ທ່ານໄດ້ຖືກນັບໄວ້ກັບຜູ້ທີ່ຜິດກົດໝາຍ”
15:29 ແລ້ວຝ່າຍຄົນທັງຫລາຍທີ່ຍ່າງຜ່ານໄປມານັ້ນ ກໍດ່າເພິ່ນ ສ່າຍຫົວຂອງເຂົາ
ເວົ້າວ່າ “ເຮີຍ ເຈົ້າຜູ້ຊິທຳລາຍພຣະວິຫານກັບສ້າງຂຶ້ນໃນສາມມື້ນ່ະ
15:30 ໃຫ້ຊ່ອຍໂຕເອງໃຫ້ລອດກ່ອນແມ່ະ ລົງມາຈາກໄມ້ກາງແຂນນັ້ນເດີ້”
15:31 ໃນທຳນອງດຽວກັນ ພວກຫົວໜ້າປະໂລຫິດ ກັບນັກທຳກໍພ້ອມກັນເຍາະເຍີ້ຍ
ເພິ່ນວ່າ “ເຂົາເຄີຍຊ່ອຍຄົນອື່ນໃຫ້ລອດໄດ້ ແຕ່ຊ່ອຍໂຕເອງບໍ່ໄດ້ເລີຍ
15:32 ໃຫ້ເຈົ້າຜູ້ເປັນ ພຣະຄຣິດ ກະສັດ ອິສະຣາເອນ ລົງມາຈາກໄມ້ກາງແຂນ
ທັນທີເຖີ ເພື່ອເຮົາຊິໄດ້ເຫັນໄດ້ເຊື່ອ” ແລ້ວໂຈນສອງຄົນນັ້ນທີ່ຖືກຕອກຄຶງໄວ້ກັບ
ເພິ່ນກໍເວົ້າຄຳຫຍາບຊ້າໃສ່ເພິ່ນນຳ

15:33 ແລ້ວບັດຍາມທ່ຽງພໍດີ ຄວາມມືດໄດ້ປົກຄຸມທົ່ວທັງແຜ່ນດິນຮອດບ່າຍສາມ
15:34 ພໍບ່າຍສາມໂມງແລ້ວ ພຣະເຢຊູ ໄດ້ຮ້ອງສຽງດັ່ງວ່າ “ ເອໂລອີ ເອໂລອີ
ລາມາສະບັກທານີ” ແປວ່າ “ພຣະເຈົ້າຂອງຜູ້ຂ້າ ເອີຍ ພຣະເຈົ້າຂອງຜູ້ຂ້າ ເອີຍ
ເປັນຫຍັງທ່ານໄດ້ປະຖິ້ມຜູ້ຂ້າ”
15:35 ແລ້ວຜູ້ລາງຄົນໃນພວກຄົນທີ່ຢືນຢູ່ຫັ້ນບັດໄດ້ຍິນກໍເວົ້າວ່າ “ນີ້ແຫລະ ເຂົາ
ເອີ້ນ ເອລີຢາ ”
15:36 ແລ້ວມີຄົນໜຶ່ງໄດ້ແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າອະງຸ່ນສົ້ມ ສຽບໃສ່ປາຍໄມ້-
ອໍ້ ເອົາໃຫ້ ພຣະເຢຊູ ກິນ ແລ້ວເວົ້າວ່າ “ໃຫ້ເຮົາປ່ອຍເຂົາໄວ້ເຖີ ຄອຍຖ້າເບິ່ງວ່າ
ເອລີຢາ ຊິລົງມາປົດເຂົາລົງຢູ່ບໍ້”
15:37 ແລ້ວຝ່າຍ ພຣະເຢຊູ ໄດ້ຮ້ອງອອກເປັນສຽງດັ່ງ ຮ້ອງແລ້ວປ່ອຍຈິດວິນຍານ
ຂອງເພິ່ນອອກໄປ
15:38 ແລ້ວໃນຍາມນັ້ນພໍດີ ມ່ານໃຫຍ່ *(ທີ່ກັ້ນຫ້ອງສັກສິດບໍລິສຸດໃນພຣະວິຫານ
ໄວ້)* ໄດ້ຖືກຈີກລົງເປັນສອງທ່ອນ ແຕ່ເທິງໄປຮອດລຸມ
15:39 ແລ້ວສ່ວນນາຍຮ້ອຍທະຫານ ໂຣມ ທີ່ຢືນຢູ່ກົງໜ້າ ພຣະເຢຊູ ບັດເຫັນວ່າ
ເພິ່ນໄດ້ຮ້ອງສຽງດັ່ງກັບໄດ້ປ່ອຍຈິດວິນຍານອອກໄປແລ້ວ ຈັ່ງເວົ້າວ່າ “ແທ້ຈິງ
ແລ້ວ ທ່ານຜູ້ນີ້ແມ່ນ ພຣະບຸດ ຂອງພຣະເຈົ້າອີຫລີ”
15:40 ແລ້ວມີພວກແມ່ຍິງຢືນເບິ່ງຢູ່ແຕ່ໄກ ແລ້ວໃນພວກແມ່ຍິງນັ້ນມີ ມາຣີອາ
ຊາວ ມັກດາລາ ກັບ ມາຣີອາ ແມ່ຂອງ ຢາໂກໂບ ຜູ້ທີ່ສອງ ກັບຂອງ ໂຢເສ ກັບ
ນາງ ສະໂລເມ
15:41 ແມ່ຍິງພວກນັ້ນເຄີຍຕິດຕາມຮັບໃຊ້ ພຣະເຢຊູ ຕອນເພິ່ນຢູ່ໃນແຄວ້ນ ກາລີ-
ເລ ແລ້ວກໍມີແມ່ຍິງອື່ນໆ ອີກຫລາຍຄົນທີ່ໄດ້ຂຶ້ນມາຍັງ ກຸງເຢຣູຊາເລັມ ກັບເພິ່ນ
ຫວ່າງນັ້ນ
15:42 ແລ້ວບັດໃກ້ຊິຮອດຄ່ຳ ຊຶ່ງເປັນມື້ກຽມສະຫລອງ ຄືມື້ກ່ອນມື້ພັກງານຂອງ
ຊາວຢິວ

15:43 ໂຢເຊບ ຊາວ ອາຣິມາທາຍ ຊຶ່ງເປັນສະມາຊິກສະພາ ຜູ້ທີ່ເປັນຕານັບຖື ທັງ
ລາວ ພວມຄອຍຖ້າລາຊະອານາຈັກຂອງພຣະເຈົ້ານຳ ບັດນີ້ ລາວ ໄດ້ເຂົ້າໄປຫາ
ນາຍ ປີລາດ ໂດຍຄວາມກ້າໄດ້ຂໍສົບຂອງ ພຣະເຢຊູ
15:44 ແລ້ວນາຍ ປີລາດ ກໍແປກໃຈເປັນຕາງຶດທີ່ ພຣະເຢຊູ ຕາຍແລ້ວ ຈັ່ງເອີ້ນນາຍ
ຮ້ອຍມາຖາມລາວວ່າ ພຣະເຢຊູ ຕາຍແລ້ວບໍ້
15:45 ແລ້ວບັດໄດ້ຮູ້ເລື່ອງຈາກນາຍຮ້ອຍແລ້ວ ເຂົາຈັ່ງມອບສົບ ພຣະເຢຊູ ໃຫ້ນາຍ
ໂຢເຊບ
15:46 ແລ້ວຝ່າຍນາຍ ໂຢເຊບ ລາວ ໄດ້ຊື້ຜ້າປ່ານເນື້ອລະອຽດ ກັບໄດ້ຍົກເອົາສົບ
ຂອງເພິ່ນລົງມາ ແລ້ວເອົາຜ້າປ່ານພັນຫຸ້ມສົບເພິ່ນໄວ້ ແລ້ວເອົາສົບຂອງເພິ່ນໄປ
ວາງໄວ້ໃນອຸບໂມງ ຊຶ່ງສະກັດໄວ້ໃນຫີນແຂງ ແລ້ວຈັ່ງກິ້ງກ້ອນຫີນລົງອັດປາກ
ອຸບໂມງໄວ້
15:47 ແລ້ວຝ່າຍ ມາຣີອາ ຊາວ ມັກດາລາ ກັບ ມາຣີອາ ຜູ້ເປັນແມ່ຂອງ ໂຢເສ ໄດ້
ສັງເກດໝ້ອງທີ່ສົບຂອງເພິ່ນຖືກມ້ຽນໄວ້

## ມາຣະໂກ ບົດທີ 16

16:1 ບັດພໍມື້ພັກງານຂອງ ຊາວຢິວ ຜ່ານໄປແລ້ວ ມາຣີອາ ຊາວ ມັກດາລາ ມາຣີ-
ອາ ແມ່ຂອງ ຢາໂກໂບ ກັບນາງ ສະໂລເມ ຊື້ເຄື່ອງຫອມມາເພື່ອຊິໄປທົດສົງສົບ
ຂອງ ພຣະເຢຊູ
16:2 ແລ້ວຕອນເຊົ້າມືດມື້ຕົ້ນອາທິດ *(ຄືມື້ອາທິດ)* ເຂົາກໍມາຮອດອຸບໂມງຕອນ
ຕະເວັນ ພວມ ຊິຂຶ້ນ
16:3 ແລ້ວເຂົາເວົ້າກັນວ່າ “ໃຜຊິຊ່ອຍກິ້ງກ້ອນຫີນນັ້ນອອກຈາກປາກອຸບໂມງ”
16:4 ແລ້ວບັດເຂົາຫລຽວເບິ່ງ ໄດ້ເຫັນກ້ອນຫີນນັ້ນ ຊຶ່ງເປັນກ້ອນຫີນທີ່ໃຫຍ່ຂະໜ
າດ ໄດ້ຖືກກິ້ງອອກໄປແລ້ວ
16:5 ບັດພໍເຂົາເຂົ້າໄປໃນອຸບໂມງແລ້ວ ໄດ້ເຫັນໜຸ່ມຜູ້ໜຶ່ງນຸ່ງຫົ່ມຜ້າຍາວເປັນສີ
ຂາວຈົ່ວະ ນັ່ງຢູ່ຂ້າງຂວາ ແມ່ຍິງພວກນັ້ນກໍເລີຍຕົກໃຈຫລາຍ
16:6 ແລ້ວຝ່າຍໜຸ່ມນັ້ນບອກເຂົາວ່າ “ຢ່າຕົກໃຈເລີຍ ພວກເຈົ້າມາຫາ ພຣະເຢຊູ
ຊາວ ນາຊາເຣັດ ຊຶ່ງໄດ້ຖືກຕອກຄຶງໄວ້ທີ່ໄມ້ກາງແຂນນັ້ນ ເພິ່ນໄດ້ເປັນຂຶ້ນມາ

ຈາກຕາຍແລ້ວ ເພິ່ນບໍ່ໄດ້ຢູ່ນີ້ດອກ ນີ້ແຫລະ ເບິ່ງໜ້ອງທີ່ເຂົາໄດ້ວາງສົບຂອງ
ເພິ່ນນັ້ນ
16:7 ໃຫ້ໄປບອກພວກລູກສິດຂອງ ພຣະເຢຊູ ທັງ ເປໂຕ ເດີ້ວ່າ ເພິ່ນໄປຍັງແຄວັ້ນ
ກາລີເລ ກ່ອນພວກເຈົ້າແລ້ວ ພວກເຈົ້າຊິເຫັນເພິ່ນຢູ່ຫັ້ນ ຄືກັນກັບເພິ່ນໄດ້ເວົ້າໄວ້
ກັບພວກເຈົ້າມາແລ້ວ”
16:8 ແລ້ວແມ່ຍິງພວກນັ້ນກໍຟ້າວໜີອອກຈາກອຸບໂມງໄປ ຍ້ອນຕົກໃຈໂຕສັ່ນ
ແລ້ວເຂົາບໍ່ໄດ້ເວົ້າກັບໃຜຍ້ອນເຂົາຢ້ານ
16:9 ຄືຍາມເຊົ້າມືດມື້ຕົ້ນອາທິດນັ້ນ ບັດ ພຣະເຢຊູ ໄດ້ເປັນຂຶ້ນມາຈາກຕາຍແລ້ວ
ເພິ່ນໄດ້ສຳແດງໂຕເພິ່ນເອງໃຫ້ ມາຣີອາ ຊາວ ມັກດາລາ ເຫັນກ່ອນ ຄືຄົນນັ້ນທີ່
ເພິ່ນໄດ້ຂັບໄລ່ຜີອອກເຈັດໂຕ
16:10 ແລ້ວ ມາຣີອາ ຈັ່ງອອກໄປບອກພວກຄົນທີ່ເຄີຍຢູ່ກັບເພິ່ນແຕ່ກ່ອນ ຫວ່າງ-
ນັ້ນພວກເຂົາພວມຮ້ອງໄຫ້ເປັນທຸກຢູ່
16:11 ແລ້ວບັດພວກເຂົາໄດ້ຍິນວ່າ ພຣະເຢຊູ ເປັນຂຶ້ນມາຈາກຕາຍແລ້ວ ກັບວ່າ
ມາຣີອາ ໄດ້ເຫັນເພິ່ນແລ້ວ ພວກເຂົາກໍບໍ່ເຊື່ອ
16:12 ແລ້ວຫລັງຈາກນັ້ນ ພຣະເຢຊູ ໄດ້ສະແດງໂຕເພິ່ນໃນອີກລັກສະນະໜຶ່ງຕໍ່
ລູກສິດສອງຄົນ ບັດສອງຄົນເຂົາພວມຍ່າງອອກໄປຕາມທາງໃນຊົນນະບົດ
16:13 ແລ້ວລູກສິດສອງຄົນນັ້ນຈັ່ງໄປບອກລູກສິດຄົນອື່ນໆ ແຕ່ເຂົານັ້ນກໍບໍ່ເຊື່ອຄື
ກັນ
16:14 ຢູ່ມາ ພຣະເຢຊູ ໄດ້ສຳແດງໂຕເພິ່ນເອງຕໍ່ລູກສິດສິບເອັດຄົນຕອນເຂົາພວມ
ກິນເຂົ້າຢູ່ ແລ້ວເພິ່ນເລີຍວ່າເຂົາຍ້ອນຄວາມບໍ່ເຊື່ອກັບໃຈແຂງກະດ້າງຂອງ
ພວກເຂົາ ຍ້ອນເຂົາບໍ່ຍອມເຊື່ອຄົນທີ່ໄດ້ເຫັນເພິ່ນຫລັງຈາກເປັນຂຶ້ນມາຈາກ
ຕາຍແລ້ວນັ້ນ
16:15 ແລ້ວຝ່າຍ ພຣະເຢຊູ ຈັ່ງເວົ້າສັ່ງພວກລູກສິດວ່າ “ໃຫ້ພວກເຈົ້າອອກໄປທົ່ວ-
ໂລກເຖີ ແລ້ວປະກາດຂ່າວປະເສີດຕໍ່ມະນຸດໝົດຄູ່ຄົນເດີ້
16:16 ຜູ້ທີ່ເຊື່ອວາງໃຈກັບຮັບພິທີຈຸ່ມນ້ຳກໍຊິລອດ ແຕ່ຝ່າຍຜູ້ທີ່ບໍ່ຮັບເຊື່ອຊິບໍ່ຫລີກ-
ເວັ້ນການລົງໂທດ

16:17 ແລ້ວເຄື່ອງໝາຍສຳຄັນແນວໝູ່ນີ້ຊິຕາມຄົນທີ່ເຊື່ອ ຄືເຂົາຊິຂັບໄລ່ຜີອອກ
ໂດຍໃນນາມຂອງເຮົາ ເຂົາຊິເວົ້າພາສາອື່ນໆ *ທີ່ບໍ່ຮູ້ຈັກມາກ່ອນ*
16:18 ພວກເຂົາຊິຈັບງູຂຶ້ນມາໄດ້ ແລ້ວຄັນເຂົາຊິກິນຊິດື່ມແນວເປັນພິດເປັນໄພ ມັນ
ຊິບໍ່ເປັນອັນຕະລາຍກັບເຂົາ ແລ້ວເຂົາຊິວາງມືເທິງຄົນເຈັບໄຂ້ ແລ້ວຄົນເຈັບໄຂ້
ນັ້ນຊິເຊົາເປັນດີ ໂລດ"
16:19 ຈັ່ງຊັ້ນ ບັດອົງພຣະຜູ້ເປັນເຈົ້າເວົ້າກັບເຂົາແລ້ວ ເພິ່ນຈັ່ງຖືກຮັບຂຶ້ນໄປໃນ
ສະຫວັນ ນັ່ງຢູ່ເບື້ອງຂວາຂອງພຣະເຈົ້າ
16:20 ແລ້ວພວກລູກສິດນັ້ນຈັ່ງອອກໄປປະກາດສອນຢູ່ທົ່ວໝົດຄູ່ໝ້ອງ ແລ້ວອົງ-
ພຣະຜູ້ເປັນເຈົ້າໄດ້ຮ່ວມງານນຳເຂົາ ສະໜັບສະໜູນຄຳສອນຂອງເຂົາໂດຍ
ເຄື່ອງໝາຍສຳຄັນທີ່ປະກອບຕາມຫັ້ນ ອາເມນ

# ລູກາ

## ລູກາ ບົດທີ 1

1:1-4 ສະບາຍດີທ່ານ ເທໂອຟີໂລ ໝູ່ຜູ້ຮັກພຣະເຈົ້າ ກໍ່ເຮົາຊິສົ່ງຈົດໝາຍມາໃຫ້ໝູ່
ນີ້ ກໍຍ້ອນວ່າເລື່ອງນັ້ນທີ່ເປັນໄປແລ້ວຢູ່ທາງນີ້ຄືເລື່ອງ ພຣະເຢຊູ ນັ້ນ ໄດ້ມີຫລາຍ
ຄົນລົງມືບັນທຶກໄວ້ແໜ່ແລ້ວຄືຜູ້ທີ່ເຂົາໄດ້ຮັບມອບໝາຍ ພຣະຄຳ ຂອງພຣະເຈົ້າ
ພວກເຂົານັ້ນໄດ້ເຫັນກັບຕາໄດ້ຍິນກັບຫູຈັ່ງໄດ້ເປັນພະຍານຫຼັກຖານ ໄດ້ບອກໄດ້
ສອນພວກເຮົາໃຫ້ຮູ້ຈັກສືບຕໍ່ກັນມາ ເຮົາຈັ່ງເຫັນສົມຄວນທີ່ຊິຂຽນອອກມາໝົດ
ຕາມລຳດັບໃຫ້ໝູ່ຮູ້ຈັກນຳ ເພື່ອໝູ່ຊິໄດ້ໝັ້ນໃຈ ແລ້ວຮູ້ຈັກຄວາມບໍ່ຈິງຈິງຄັກແນ່
ໃນຄຳສອນທີ່ໄດ້ຍິນມານັ້ນ ຍ້ອນວ່າເຮົານີ້ໄດ້ສືບມາຄັກໝົດແລ້ວໃນເລື່ອງນີ້ຕັ້ງ
ແຕ່ທຳອິດມາ
1:5 ຄືໃນສະໄໝ ເຮໂຣດ ເປັນເຈົ້າເມືອງປົກຄອງເຂດ ຢູດາຍ ນັ້ນ ຕອນນັ້ນມີປະ-
ໂລຫິດຄົນໜຶ່ງຊື່ນາຍ ຊາຂາຣີຢາ ຜູ້ນີ້ຢູ່ໃນໝູ່ກອງເວນຂອງ ອາບີຢາ ເມຍ ລາວ
ຊື່ວ່າ ເອລີຊາເບັດ ເຂົາທັງສອງເປັນເຊື້ອສາຍຕະກູນ ອາໂຣນ *(ຜູ້ເປັນອ້າຍຂອງ
ໂມເຊ ໃນສະໄໝກ່ອນ)*
1:6 ພຣະເຈົ້າພໍໃຈກັບສອງຜົວເມຍນີ້ ຍ້ອນວ່າເຂົາໃຊ້ຊີວິດຖືກຕ້ອງຕາມແນວທາງ
ຂອງເພິ່ນທີ່ມີກ່າວໄວ້ໃນບົດບັນຍັດໝົດຄູ່ຂໍ້ບໍ່ມີໝ້ອງຕິ

1:7 ເຂົາທັງສອງກໍເຖົ້າແລ້ວ ນາງ ເອລີຊາເບັດ ນີ້ເປັນໝັນເລີຍບໍ່ມີລູກ
1:8 ຢູ່ມາມື້ໜຶ່ງ ຊາຂາຣີຢາ ຢູ່ໃນພຣະວິຫານເຮັດໜ້າທີ່ນຳເຄື່ອງຖວາຍຕາມເຄີຍ
1:9 ມື້ນັ້ນ ຊາຂາຣີຢາ ກໍໄດ້ຈັບສະຫລາກນຳໝູ່ກອງເວນຕາມປະເພນີພໍດີ ລາວກໍ
ຖືກເປັນຜູ້ຊິນຳເອົາເຄື່ອງຫອມເຜົາບູຊາເຂົ້າຖວາຍຕໍ່ພຣະເຈົ້າຢູ່ໃນຫ້ອງສັກສິດ
ໃນພຣະວິຫານ
1:10 ບັດຮອດຍາມ ລາວ ເຂົ້າໄປ ພວກຄົນ ອິສະຣາເອນ ທັງຫລາຍກໍອະທິຖານ
ໄຫວ້ວອນຕໍ່ພຣະເຈົ້າຢູ່ທາງນອກ
1:11 ຕອນ ຊາຂາຣີຢາ ພວມເຜົາເຄື່ອງຫອມຢູ່ເທິງແທ່ນບູຊາໃນຫ້ອງສັກສິດນັ້ນ
ພໍດີມີເທວະທູດອົງໜຶ່ງຂອງພຣະເຈົ້າໄດ້ລົງມາຢືນຢູ່ຂ້າງຂວາແທ່ນບູຊາ
1:12 ພໍ ຊາຂາຣີຢາ ເຫັນເທວະທູດກໍຕົກໃຈຢ້ານຢ່າງໃຫຍ່
1:13 ເທວະທູດເລີຍເວົ້າວ່າ “ຢ່າສູ່ຢ້ານເດີ້ ຊາຂາຣີຢາ ເອີຍ ເຮົານຳຂ່າວດີມາໃຫ້
ເຈົ້າຄືພຣະເຈົ້າໄດ້ຍິນຄຳວອນຂໍທີ່ເຈົ້າຂໍນຳເພິ່ນຢາກໄດ້ລູກແຕ່ດົນນານ ບັດນີ້
ເອລີຊາເບັດ ເມຍເຈົ້ານັ້ນຊິຖືພາມີທ້ອງ ແລ້ວເຈົ້າຊິໄດ້ລູກຊາຍ ໃຫ້ເຈົ້າໃສ່ຊື່ວ່າ
ໂຢຮັນ ເດີ້
1:14 ບັດ ໂຢຮັນ ເກີດມາແລ້ວເຈົ້າກໍຊິດີໃຈຫລາຍ ກັບຄົນທັງຫລາຍກໍຊິຍິນດີນຳ
1:15 ໂຢຮັນ ນີ້ຊິເປັນຄົນສຳຄັນໃນສາຍຕາຂອງພຣະເຈົ້າ ກັບເຂົາຊິບໍ່ກິນເຫລົ້າ-
ຫລືເຫລົ້າອະງຸ່ນເລີຍ ແລ້ວເຂົາຊິຈຸໃຈນຳ ພຣະວິນຍານ ຂອງພຣະເຈົ້າຕັ້ງແຕ່ຢູ່-
ໃນທ້ອງແມ່
1:16 ແລ້ວພຣະເຈົ້າຊິໃຊ້ເຂົາເປັນຜູ້ຕັກເຕືອນພວກຄົນ ອິສະຣາເອນ ໃຫ້ກັບໂຕ
ກັບໃຈມາຫາເພິ່ນ
1:17 ໂຢຮັນ ນີ້ເນາະຊິເປັນຜູ້ແປງທາງໄປກ່ອນ ໃຫ້ເພິ່ນຜູ້ນັ້ນລົງມາ ໂຢຮັນ ຊິມີ
ອຳນາດກັບຊິມີນິໄສໃຈຄໍທຳນອງດຽວກັນກັບ ເອລີຢາ ນັ້ນ(ຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າໃນສະໄໝກ່ອນພູ້ນ) ເພື່ອຊິໃຫ້ພວກພໍ່ຄືນດີກັນກັບລູກ ກັບໃຫ້
ພວກຄົນດື້ດ້ານກັບໃຈມີນິໄສເປັນຄົນດີ ຄືພຣະເຈົ້າຊິໃຊ້ ໂຢຮັນ ນີ້ໃຫ້ກຽມຄົນ
ພວກໜຶ່ງໄວ້ໃຫ້ເປັນຄົນຂອງເພິ່ນ”

1:18 ພໍເທວະທູດເວົ້າຈົບ ແລ້ວ ຊາຂາຣີຢາ ກໍຖາມວ່າ "ຜູ້ຂ້າຊິຮູ້ໄດ້ແນວໃດວ່າຊິມີ
ລູກອີຫລີ ຜູ້ຂ້າກັບເມຍກໍເຖົ້າຫລາຍແລ້ວ"
1:19 ເທວະທູດເລີຍເວົ້າວ່າ "ຮວ້າຍ ຄືບໍ່ເຊື່ອເຮົາເນາະ ເຮົາຊື່ ຄັບຣິເອັນ ເປັນທູດ
ຮັບໃຊ້ຂອງພຣະເຈົ້າ ເຮົາຢືນຢູ່ຕໍ່ໜ້າພຣະເຈົ້າຖ້າຟັງແຕ່ຄຳສັ່ງຂອງເພິ່ນ ບັດນີ້
ເພິ່ນໄດ້ໃຊ້ເຮົາມາບອກຂ່າວດີນີ້ໃຫ້ເຈົ້າຮູ້
1:20 ຈັ່ງຊັ່ນ ນີ້ແຫລະ ແຕ່ນີ້ຕໍ່ໄປເຈົ້າຊິປາກກືກເວົ້າບໍ່ອອກຈົນຮອດມື້ລູກເຈົ້າອອກ
ມາ ຍ້ອນວ່າເຈົ້າບໍ່ເຊື່ອໃນຄວາມເວົ້າຂອງເຮົາທີ່ມັນຊິເປັນໄປອີຫລີຕາມກຳນົດ
ນັ້ນ"
1:21 ພວກຄົນທີ່ຖ້າ ຊາຂາຣີຢາ ຢູ່ທາງນອກຫ້ອງສັກສິດນັ້ນກໍສົງໄສຄືຢູ່ໂດນແທ້
ບໍ່ອອກມາຈັກເທື່ອ
1:22 ພໍ ຊາຂາຣີຢາ ອອກມາ ແລ້ວກໍປາກກືກເວົ້າກັບເຂົາບໍ່ອອກ ໃຊ້ແຕ່ພາສາໃບ້ຊີ້
ມືເອົາຊື່ໆ ພວກຄົນທີ່ຖ້າຢູ່ນັ້ນຈັ່ງຮູ້ຈັກວ່າ ຊາຂາຣີຢາ ຕ້ອງໄດ້ເຫັນອີຫຍັງແນວ
ໃດແນວໜຶ່ງມາຈາກພຣະເຈົ້າຢູ່ໃນຫ້ອງສັກສິດນັ້ນ
1:23 ຢູ່ມາພໍ ຊາຂາຣີຢາ ໝົດໜ້າທີ່ຮັບໃຊ້ໃນພຣະວິຫານແລ້ວລາວກໍອອກເວນຄືນ
ເມືອບ້ານ
1:24 ແລ້ວຫລັງຈາກນັ້ນມານາງ ເອລີຊາເບັດ ເມຍ ລາວ ນັ້ນກໍໄດ້ຖືພາມີທ້ອງອີຫລີ
ແລ້ວໄດ້ກັກໂຕຢູ່ແຕ່ໃນເຮືອນຫ້າເດືອນ ຍົກຍ້ອງແຕ່ພຣະເຈົ້າວ່າ
1:25 "ສາທຸ ຂອບໃຈພຣະເຈົ້າເດີ້ ທີ່ເພິ່ນໄດ້ເມດຕາຊ່ອຍຖອນຄວາມອັບອາຍຂອງ
ຂ້ອຍອອກໄປ ທີ່ມີຕໍ່ໄທບ້ານໄທເມືອງມາດົນນານ"
1:26 ແລ້ວຢູ່ຕໍ່ມາຕອນນາງ ເອລີຊາເບັດ ຖືພາໄດ້ຫົກເດືອນ ພຣະເຈົ້າກໍໄດ້ໃຊ້ເທ-
ວະທູດ ຄັບຣິເອັນ ນັ້ນອີກ ໃຫ້ໄປເມືອງ ນາຊາເຣັດ ຢູ່ໃນເຂດ ກາລີເລ ນັ້ນ
1:27 ໄປຫາສາວບໍລິສຸດທີ່ເປັນຄູ່ໝັ້ນຂອງ ໂຢເຊບ ຜູ້ເປັນເຊື້ອສາຍຂອງ ດາວິດ
ກະສັດ ອິສະຣາເອນ ແຕ່ສະໄໝກ່ອນ ນາງນີ້ຊື່ວ່າ ມາຣິອາ
1:28 ເທວະທູດນັ້ນກໍເວົ້າກັບນາງ ມາຣິອາ ວ່າ "ນາງເອີຍໃຫ້ເຈົ້າຊື່ນໃຈເດີ້ ຄືພຣະ-
ເຈົ້າຮັກແພງພໍໃຈນຳເຈົ້າຫລາຍ ເພິ່ນຢູ່ນຳເຈົ້າແລ້ວ ເຈົ້າໄດ້ພົນໃນໝູ່ຍິງທັງ-
ຫລາຍ"

1:29 ພໍເຫັນເທວະທູດແລ້ວນາງກໍຕົກໃຈຫລາຍ ຄຶດບໍ່ອອກວ່າຄວາມເວົ້າຂອງເທ-
ວະທູດນັ້ນຈັກຊິໝາຍຄວາມວ່າຈັ່ງໃດ
1:30 ເທວະທູດເລີຍເວົ້າອີກວ່າ “ບໍ່ເປັນຫຍັງ ມາຣີອາ ເອີຍ ບໍ່ຕ້ອງຢ້ານເດີ້ຍ້ອນ
ພຣະເຈົ້າພໍໃຈນຳເຈົ້າຫລາຍ
1:31 ແລ້ວ ນີ້ແຫລະ ເຈົ້າຊິຕັ້ງທ້ອງ ຖືພາມີທ້ອງ ບັດລູກອອກມາແລ້ວໃຫ້ເຈົ້າໃສ່ຊື່
ລູກວ່າ ເຢຊູ ເດີ້
1:32 ເຢຊູ ນີ້ເພິ່ນຊິເປັນຜູ້ຍິ່ງໃຫຍ່ ຄົນຊິເອີ້ນກັນວ່າເປັນ ພຣະບຸດ ຂອງພຣະເຈົ້າຜູ້
ຢູ່ສູງສຸດ ແລ້ວພຣະເຈົ້າຊິມອບບັນລັງຂອງກະສັດ ດາວິດ ນັ້ນໃຫ້ ເຢຊູ ປົກຄອງ
1:33 ຄື ເຢຊູ ນີ້ຊິປົກຄອງຄົນ ອິສະຣາເອນ (ເຊື້ອສາຍ ຢາໂຄບ ) ໄປຕະຫລອດບໍ່ມີ
ມື້ສຳເລັດ”
1:34 ແລ້ວ ມາຣີອາ ກໍຖາມເທວະທູດວ່າ “ຊິເປັນໄປໄດ້ແນວໃດນໍ້ ຜູ້ຂ້າຍັງເປັນສາວ
ບໍລິສຸດຢູ່ ບໍ່ເຄີຍສົມສູ່ກັບຜູ້ຊາຍ”
1:35 ເທວະທູດເລີຍບອກນາງວ່າ “ຄືມັນເປັນຈັ່ງຊີ້ ພຣະວິນຍານ ຂອງພຣະເຈົ້າຊິ
ມາປົກຄຸມເຈົ້າໄວ້ ແລ້ວເພິ່ນຊິບັນດານໃຫ້ເຈົ້າຖືພາມີທ້ອງໂດຍລິດອຳນາດຂອງ
ເພິ່ນ ຈັ່ງຊັ້ນຜູ້ບໍລິສຸດທີ່ຊິມາເກີດນຳເຈົ້ານັ້ນ ຄົນກໍຊິເອີ້ນກັນວ່າ ພຣະບຸດ ຂອງ
ພຣະເຈົ້າ”
1:36 “ແລ້ວບັດນີ້ ນາງ ເອລີຊາເບັດ ພີ່ນ້ອງຂອງເຈົ້າທີ່ເຄີຍເປັນໝັນນັ້ນ ກໍຍັງມີ
ທ້ອງໄດ້ຫົກເດືອນແລ້ວ ດຽວນີ້ເຂົາເຖົ້າກໍຕາມໝັນກໍຢ່າ ພຣະເຈົ້າໄດ້ຊ່ອຍໃຫ້
ເຂົາມີລູກຊາຍແລ້ວ
1:37 ຄືສຳລັບພຣະເຈົ້ານັ້ນບໍ່ມີອີຫຍັງຈັກແນວທີ່ຊິເປັນໄປບໍ່ໄດ້”
1:38 ແລ້ວນາງ ມາຣີອາ ເລີຍເວົ້າວ່າ “ນີ້ແຫລະ ຜູ້ຂ້ານີ້ເປັນພຽງຂ້າທາດຂອງ
ພຣະເຈົ້າຊື່ໆ ຜູ້ຂ້າຂໍຍອມໃຫ້ມັນເປັນໄປຕາມແຜນການຂອງເພິ່ນໝົດຄູ່ແນວຄື
ເຈົ້າເວົ້າສາ” ພໍ ມາຣີອາ ເວົ້າແລ້ວເທວະທູດກໍເມືອ
1:39 ແລ້ວ ມາຣີອາ ກໍລຸກຂຶ້ນຟ້າວຂຶ້ນໄປໂນນພູ ເຂົ້າເມືອງໜຶ່ງໃນເຂດ ຢູດາຍ
1:40 ແລ້ວເຂົ້າເຮືອນຂອງ ຊາຂາຣີຢາ ນາງ ມາຣີອາ ກໍເລີຍທັກທາຍກັນກັບ ເອລີ-
ຊາເບັດ

1:41 ພໍ ເອລີຊາເບັດ ໄດ້ຍິນນາງ ມາຣີອາ ເວົ້າຄຳທັກທາຍ ລູກໃນທ້ອງຂອງ ລາວ
ນັ້ນກໍດີ້ນ ແລ້ວ ເອລີຊາເບັດ ກໍເຕັມດ້ວຍການຊົງນຳຂອງ ພຣະວິນຍານ ບໍລິສຸດ
1:42 ລາວ ຈັ່ງທ້ວງ ມາຣີອາ ຮ້ອງຢ່າງດີອົກດີໃຈວ່າ “ພຣະເຈົ້າໄດ້ອວຍພອນເຈົ້າ
ຫລາຍກວ່າໝູ່ໃນໝູ່ແມ່ຍິງທັງໝົດ ກັບໄດ້ອວຍພອນລູກທີ່ຢູ່ໃນທ້ອງເຈົ້ານຳ
1:43 ເປັນຈັ່ງໃດໂຕຂ້ອຍຈັ່ງມີກຽດຄືນີ້ ທີ່ວ່າແມ່ຂອງພຣະຜູ້ເປັນເຈົ້າຂອງຜູ້ຂ້າ ໄດ້
ມາຢ້ຽມມາຍາມຜູ້ຂ້າ *ຮອດເຮືອນ*
1:44 ຄືດເບິ່ງ ພໍຜູ້ຂ້າໄດ້ຍິນສຽງປາກຂອງເຈົ້າທັນທີ ລູກໃນທ້ອງຜູ້ຂ້າກໍດີ້ນດີອົກ-
ດີໃຈຢ່າງໃຫຍ່
1:45 ຄືຍິງທີ່ເຊື່ອໝັ້ນກໍໄດ້ພົບເປັນສຸກຫລາຍ ໂດຍວ່າມັນຊິເປັນໄປຕາມແນວທີ່
ພຣະຜູ້ເປັນເຈົ້າໄດ້ບອກເຂົາໄວ້ນັ້ນ”
1:46 ພໍນາງ ເອລີຊາເບັດ ເວົ້າແລ້ວ ມາຣີອາ ກໍເລີຍເວົ້າວ່າ “ສາທຸພຣະເຈົ້າ ຈິດໃຈ
ຂອງຜູ້ຂ້າຍົກຍ້ອງສັນລະເສີນພຣະຜູ້ເປັນເຈົ້າ
1:47 ຈິດວິນຍານຂອງຜູ້ຂ້ານີ້ຢາກຍົກຍ້ອງພຣະເຈົ້າ ພຣະຜູ້ໂຜດຂອງຜູ້ຂ້າ
1:48 ຍ້ອນວ່າເພິ່ນກໍຍັງຄຶດເຫັນແກ່ຖານະຕ່ຳຕ້ອຍຂອງຜູ້ຂ້ານີ້ ຜູ້ເປັນພຽງແຕ່ຄົນ-
ໃຊ້ຂອງເພິ່ນ ນີ້ແຫລະ ແຕ່ນີ້ຕໍ່ໄປຄູ່ຊົ່ວອາຍຸຄົນຊິວ່າຜູ້ຂ້າໄດ້ຮັບພົບເປັນສຸກ
ຫລາຍ
1:49 ຄືພຣະເຈົ້າຜູ້ຊົງລິດ ໄດ້ເຮັດແນວອັນຍິ່ງໃຫຍ່ຂອງເພິ່ນໃຫ້ຜູ້ຂ້ານີ້ ຜູ້ຂ້າຈັ່ງໄດ້
ຍົກຍ້ອງພຣະນາມອັນສັກສິດບໍລິສຸດຂອງເພິ່ນ ອາເມນ
1:50 ຍຸກໃດກໍຢ່າ ພຣະເຈົ້າສະແດງຄວາມເມດຕາຕໍ່ຄູ່ຄົນທີ່ເຄົາລົບເຄົາລົບເພິ່ນ
1:51 ເພິ່ນເຄີຍສະແດງລິດອຳນາດຂອງເພິ່ນ *(ໃນຄູ່ຍາມອາຍຸຄົນ)* ຄືເພິ່ນໄດ້ໄລ່ຜູ້
ທີ່ຖືໂຕມີໃຈຈອງຫອງນັ້ນໃຫ້ເຂົາແຕກໜີໄປ
1:52 ເພິ່ນເຄີຍປົດຜູ້ນຳທີ່ໃຊ້ອຳນາດໃນທາງບໍ່ແມ່ນໃຫ້ເຂົາອອກຈາກບັນລັງ ແລ້ວ
ເພິ່ນໄດ້ ຕັ້ງຜູ້ທີ່ມີໃຈອ່ອນນ້ອມຂຶ້ນປົກຄອງແທນ
1:53 ເພິ່ນເຄີຍໄລ່ຜູ້ຮັ່ງຜູ້ມີທີ່ໃຈໂລບນັ້ນ ໃຫ້ໜີໄປມືບໍ່ ແລ້ວເພິ່ນໄດ້ລ້ຽງຄົນທີ່ມີໃຈ
ອຶດຢາກໝາກຫິວໃຫ້ອີ່ມແຕ່ຂອງດີໆ

1:54 ແລ້ວເພິ່ນເຄີຍເມດຕາຊ່ວຍພວກຄົນ ອິສະຣາເອນ ຜູ້ຮັບໃຊ້ຂອງເພິ່ນຍ້ອນ
ເພິ່ນເຫັນແກ່ຄຳສັນຍາຂອງເພິ່ນເອງນັ້ນ
1:55 ຕາມທີ່ເພິ່ນໄດ້ສັນຍາໄວ້ ກັບ ອັບຣາຮາມ ພໍ່ຕະກູນຂອງພວກເຮົາ ພ້ອມກັບຄູ່
ຊົ່ວອາຍຸຄົນສືບຕໍ່ກັນໄປເປັນນິດ”
1:56 ນາງ ມາຣີອາ ກໍໄດ້ພັກຢູ່ນຳນາງ ເອລີຊາເບັດ ນັ້ນໄດ້ສາມເດືອນ ແລ້ວຈັ່ງ
ຄ່ອຍເມືອບ້ານ
1:57 ແລ້ວນາງ ເອລີຊາເບັດ ພໍທ້ອງຮອດເກົ້າເດືອນແລ້ວ ກໍໄດ້ອອກລູກເປັນຜູ້-
ຊາຍ
1:58 ແລ້ວບັດພໍພໍ່ແມ່ພີ່ນ້ອງກັບພວກໄທບ້ານຮູ້ຂ່າວວ່າ ເອລີຊາເບັດ ອອກລູກ
ແລ້ວ ພວກເຂົາກໍຍິນດີນຳທີ່ພຣະເຈົ້າໄດ້ສະແດງຄວາມເມດຕາຕໍ່ນາງ
1:59 ແລ້ວພໍເດັກນ້ອຍອອກມາໄດ້ແປດມື້ແລ້ວ ພວກພີ່ນ້ອງກັບໄທບ້ານໄດ້ມາ
ຮ່ວມກັນເຮັດພິທີຕັດໝາຍໂຕໄວ້ຕາມປະເພນີ ແລ້ວພວກເຂົາວ່າຊິໃສ່ຊື່ເດັກ
ນ້ອຍວ່າ ຊາຂາຣີຢາ ຕາມຊື່ພໍ່ນັ້ນ
1:60 ແຕ່ ເອລີຊາເບັດ ຜູ້ເປັນແມ່ກໍບອກວ່າ “ບໍ່ເອົາຊື່ນີ້ ຕ້ອງໃສ່ຊື່ວ່າ ໂຢຮັນ ”
1:61 ແລ້ວພວກເຂົາກໍທ້ວງວ່າ “ໃນພວກພີ່ນ້ອງຂອງເຮົານີ້ ບໍ່ມີໃຜໃສ່ຊື່ວ່າຈັ່ງຊີ້ຈັກ
ຄົນເດ້”
1:62 ພວກເຂົາກໍເລີຍໃຊ້ພາສາໃບ້ຖາມ ຊາຂາຣີຢາ ເບິ່ງວ່າຊິໃສ່ຊື່ວ່າຈັ່ງໃດຊັ່ນ
1:63 ຊາຂາຣີຢາ ເລີຍຊີ້ມືຂໍເອົາແປ້ນກະດານມາ ແລ້ວຂຽນວ່າ “ຊື່ເດັກວ່າ ໂຢ-
ຮັນ ” ບັດນີ້ພວກເຂົາກໍແປກໃຈເປັນຕາງຶດ *(ທີ່ ລາວ ບໍ່ໃສ່ຊື່ລູກຖ່າຍທອດຕາມ
ປະເພນີ)*
1:64 ພໍຂຽນລົງທັນທີ ຊາຂາຣີຢາ ກໍເຊົາກືກກັບໝ້ອງ ເວົ້າໄດ້ຄືເກົ່າ ລາວກໍດີໃຈ
ຫລາຍເລີຍເວົ້າຍົກຍ້ອງພຣະເຈົ້າຢູ່ຫັ້ນ
1:65 ພວກໄທບ້ານກໍພາກັນງຶດຢ່າງໃຫຍ່ (ແລ້ວຕໍ່ມາເລື່ອງນີ້ກໍຊ່າລືໄປທົ່ວແຖວ
ໂນນພູເຂດ ຢູດາຍ

1:66 ແລ້ວພວກຄົນທີ່ໄດ້ຍິນກໍຈື່ກັນໄວ້ ແລ້ວເວົ້າກັນວ່າ “ຖ້ານີ້ແຫລະ ບັດເດັກ
ນ້ອຍ ໂຢຮັນ ນີ້ໃຫຍ່ຂຶ້ນມາແລ້ວ ມັນຊິເປັນແນວໃດ” ແລ້ວພຣະເຈົ້າໄດ້ຢູ່ນຳ ໂຢ-
ຮັນ ອີຫລີ)
1:67 ບັດນີ້ພໍ່ ຊາຂາຣີຢາ ລາວກໍເຕັມໄປດ້ວຍການຊົງນຳຂອງ ພຣະວິນຍານ ບໍລິ-
ສຸດ ຈັ່ງທຳນາຍຄຳພະຍາກອນວ່າ
1:68 “ສາທຸເດີ້ ພຣະເຈົ້າຂອງຊາດ ອິສະຣາເອນ ເຮົານີ້ ເພິ່ນໄດ້ມາຢູ່ນຳແລ້ວມາ
ກະລຸນາຄົນຂອງເພິ່ນແລ້ວ
1:69 ຄືພຣະເຈົ້ານີ້ໄດ້ສົ່ງພຣະຜູ້ໂຜດຜູ້ມີລິດມາໃຫ້ພວກເຮົາແລ້ວ ມາທາງເຊື້ອ-
ສາຍຂອງກະສັດ ດາວິດ ຜູ້ຮັບໃຊ້ຂອງເພິ່ນ
1:70 ຕາມທີ່ພຣະເຈົ້າໄດ້ກ່າວໄວ້ຜ່ານຜູ້ເປັນປາກເປັນສຽງອັນບໍລິສຸດຂອງເພິ່ນ ຊຶ່ງ
ມີຢູ່ຕັ້ງແຕ່ການສ້າງ ໂລກມາພຸ້ນ
1:71 ກ່າວໄວ້ວ່າ ພວກເຮົາຊິໄດ້ຮັບການລອດພົ້ນຈາກມືຂອງພວກສັດຕູຄູ່ຄົນທີ່
ຄຽດຊັງພວກເຮົານັ້ນ
1:72 ແລ້ວສະແດງຄວາມເມດຕາຕາມທີ່ເພິ່ນໄດ້ສັນຍາໄວ້ຕໍ່ປູ່ຍ່າຕາຍາຍຂອງ
ພວກເຮົານັ້ນ
1:73 ຄືຄຳໝັ້ນສັນຍາທີ່ເພິ່ນໃຫ້ໄວ້ກັບ ອັບຣາຮາມ ພໍ່ຕະກູນຂອງພວກເຮົາໃນສະໄ
ໝກ່ອນພຸ້ນ
1:74 ທີ່ວ່າຊິກະລຸນາເມດຕາຊ່ອຍຊາດຂອງເຮົາໃຫ້ລອດພົ້ນຈາກມືສັດຕູຂອງພວກ
ເຮົາ ເພື່ອພວກເຮົາຊິຮັບໃຊ້ເພິ່ນໂດຍບໍ່ມີຄວາມຢ້ານຢ້ານຫຍັງ
1:75 ຄືຮັບໃຊ້ເພິ່ນດ້ວຍໃຈບໍລິສຸດ ເປັນຄົນຖືກຕ້ອງຕໍ່ໜ້າເພິ່ນຕະຫລອດຊີວິດ
ຂອງພວກເຮົາ”
1:76 ແລ້ວ ຊາຂາຣີຢາ ໄດ້ຫລຽວເບິ່ງເດັກນ້ອຍ ໂຢຮັນ ເວົ້າວ່າ “ລູກເອີຍ ພວກຄົນ
ຊິເອີ້ນກັນວ່າ ເຈົ້າເປັນປາກເປັນສຽງຂອງພຣະເຈົ້າຜູ້ຢູ່ສູງສຸດ ຍ້ອນວ່າເຈົ້າຊິເປັນ
ຜູ້ແປງທາງຂອງເພິ່ນໄປກ່ອນ
1:77 ເພື່ອຊິໃຫ້ຄົນຂອງເພິ່ນຮູ້ຈັກທາງລອດພົ້ນຈາກບາບ ໂດຍການໃຫ້ອະໄພ
ໂທດບາບຂອງເຂົາ

1:78 ເປັນໂດຍຄວາມເມດຕາກະລຸນາຂອງພຣະເຈົ້າຂອງພວກເຮົາ ບັດພໍ່ຜູ້ເປັນ
ແສງອາລຸນຈາກເບື້ອງເທິງມາຢ້ຽມມາຍາມພວກເຮົາ
1:79 ເພິ່ນຊິສ່ອງແສງໄວ້ໃຫ້ຄູ່ຄົນທີ່ນັ່ງຖ້າຕາຍຢູ່ໃນເງົາຄວາມມືດ ແລ້ວນໍາເຂົາໃນ
ທາງສັນຕິພາບນັ້ນເອງ”
1:80 (ຢູ່ມາ ໂຢຮັນ ກໍໄດ້ໂຕຂຶ້ນ ມີໃຈເຂັ້ມແຂງຂຶ້ນຢ່າງຕໍ່ເນື່ອງ ແລ້ວກໍໄດ້ໄປອາ-
ໄສຢູ່ໃນຖິ່ນແຫ້ງແລ້ງບໍລິເວນເປົ່າປ່ຽວທີ່ບໍ່ມີຄົນຢູ່ ຈົນຮອດມື້ທີ່ເຂົາໄດ້ອອກໄປ
ສະແດງໂຕຕໍ່ໜ້າພວກຄົນ ອິສະຣາເອນ ບອກໃຫ້ກັບໃຈຖ້າຮັບພຣະເຈົ້າສະເດັດ
ລົງມາ)

## ລູກາ ບົດທີ 2

2:1 ໃນສະໄໝນັ້ນ *ຈັກກະພັດ ກາຍຊາ ໂອຄຸໂຕ (ຜູ້ທີ່ປົກຄອງລາຊະອານາຈັກ
ໂຣມ)* ໄດ້ອອກຄໍາສັ່ງໃຫ້ປະຊາຊົນທົ່ວໂລກ ໃຫ້ໄປຈົດທະບຽນສໍາມະໂນຄົວ
2:2 ການຈົດທະບຽນເປັນເທື່ອທໍາອິດນັ້ນ ເປັນຕອນ ກີເຣນີໂອ ປົກຄອງເຂດ ຊີ-
ເຣຍ
2:3 ຈັ່ງຊັ້ນ ປະຊາຊົນທັງໝົດກໍພາກັນໄປຈົດທະບຽນຢູ່ຖິ່ນເດີມແຕ່ພໍ່ແຕ່ແມ່ຂອງ
ໃຜຂອງມັນ
2:4 ໂຢເຊບ *(ຄູ່ໝັ້ນຂອງນາງ ມາຣີອາ ນັ້ນ)* ໄດ້ອອກເດີນທາງຈາກເມືອງ ນາ-
ຊາເຣັດ ທີ່ຢູ່ເຂດ ກາລີເລ ນັ້ນ ໄປຍັງເມືອງຂອງກະສັດ ດາວິດ ຢູ່ເຂດ ຢູດາຍ ຊຶ່ງ
ເອີ້ນວ່າເມືອງ ເບັດເລເຮັມ ຍ້ອນວ່າ ໂຢເຊບ ລາວ ເປັນພີ່ນ້ອງໃນເຊື້ອສາຍຂອງ
ກະສັດ ດາວິດ
2:5 ລາວ ໄດ້ໄປຈົດທະບຽນຢູ່ນັ້ນພ້ອມກັບນາງ ມາຣີອາ ຄູ່ໝັ້ນຂອງ ລາວ ທີ່ພວມ
ທ້ອງຢູ່
2:6 ພໍໄປຢູ່ຫັ້ນນາງ ມາຣີອາ ກໍຮອດຍາມຊິອອກລູກ
2:7 ນາງເລີຍອອກລູກກົກຂອງນາງຢູ່ໃນຄອກງົວນັ້ນ ແລ້ວກໍໄດ້ເອົາຜ້າອ້ອມຕຸ້ມ
ເດັກອ່ອນ ວາງນອນໄວ້ໃນຮາງຫຍ້າ ຍ້ອນວ່າໂຮງແຮມກໍບໍ່ຫວ່າງ
2:8 ບັດນີ້ ໄດ້ມີພວກລ້ຽງແກະພັກອາໄສຢູ່ກາງທົ່ງໃນແຖວເມືອງນັ້ນ ພວມເຝົ້າ
ແກະຂອງເຂົາຢູ່ເປັນຍາມກາງຄືນ

2:9 ນີ້ແຫລະ ພໍດີມີເທວະທູດອົງໜຶ່ງມາຢືນຢູ່ທາງໜ້າພວກເຂົາ ແລ້ວແສງລັດສະ-
ໝີຂອງພຣະເຈົ້າສ່ອງລົງມາອ້ອມພວກເຂົາ ພວກເຂົາກໍເລີຍພາກັນຕົກໃຈຢ້ານ
ໝົດແຮງ
2:10 ເທວະທູດບອກວ່າ "ຢ່າສູ່ຢ້ານເດີ້ ນີ້ແຫລະ ເຮົາພວມນໍາຂ່າວດີມາບອກພວກ
ເຈົ້າ ເປັນຂ່າວດີທີ່ໃຫ້ຄວາມສຸກອັນຍິ່ງໃຫຍ່ ສໍາລັບໝົດຄູ່ຄົນທົ່ວໂລກ
2:11 ຄືໃນຄືນນີ້ມີຜູ້ໜຶ່ງໄດ້ລົງມາເກີດແລ້ວໃນເມືອງຂອງ ດາວິດ ເປັນພຣະຜູ້ໂຜດ
ຄື ພຣະຄຣິດ ອົງພຣະຜູ້ເປັນເຈົ້ານັ້ນ
2:12 ແລ້ວຊິມີສັນຍະລັກທີ່ພວກເຈົ້າຊິຮູ້ໄດ້ ຄືຊິພໍ້ເດັກນ້ອຍທີ່ມີຜ້າອ້ອມຫໍ່ໂຕໄວ້
ນອນໃນຮາງຫຍ້າຢູ່ໃນຄອກງົວ ແມ່ນຜູ້ນັ້ນເນາະ"
2:13 ເວົ້າແລ້ວ ພໍດີກໍມີກອງທັບເທວະທູດມາເຕັມທົ່ວທ້ອງຟ້າພ້ອມກັນສັນລະເສີນ
ພຣະເຈົ້າວ່າ
2:14 "ສາທຸການ ສະຫງ່າລາສີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດ ສັນຕິພາບຈົ່ງມີເທິງ-
ແຜ່ນດິນໂລກ ກັບຄວາມໂປດປານຈົ່ງມີແດ່ມວນມະນຸດທັງປວງ"
2:15 ພໍກອງທັບເທວະທູດນັ້ນກັບເມືອສະຫວັນແລ້ວ ພວກຄົນລ້ຽງແກະໄດ້ຊວນ
ກັນວ່າ "ໃຫ້ເຮົາຟ້າວໄປເມືອງ ເບັດເລເຮັມ ເຖາະ ໄປຊອກຫາແນວນັ້ນທີ່ເປັນໄປ
ແລ້ວ ຕາມທີ່ເທວະທູດຂອງພຣະເຈົ້າໄດ້ບອກເຮົາໄວ້"
2:16 ພໍຟ້າວໄປຮອດແລ້ວ ພວກເຂົາໄດ້ຮັບນາງ ມາຣີອາ ກັບ ໂຢເຊບ ພ້ອມທັງ
ເດັກອ່ອນ ເຢຊູ ນັ້ນ ນອນຢູ່ໃນຮາງຫຍ້າໃນຄອກງົວ
2:17 ພໍພວກເຂົາເຫັນເດັກອ່ອນ ເຢຊູ ນັ້ນແລ້ວ ພວກເຂົາກໍພາກັນອອກໄປບອກໃຫ້
ຄົນຢູ່ທົ່ວຮູ້ຈັກນໍາ ຕາມແນວທີ່ເທວະທູດໄດ້ມາບອກເຂົາເລື່ອງເດັກອ່ອນນັ້ນ
2:18 ແລ້ວຄົນທັງຫລາຍທີ່ໄດ້ຍິນກໍພາກັນແປກໃຈເປັນຕາງຶດໃນເລື່ອງທີ່ພວກລ້ຽງ
ແກະເວົ້າໃຫ້ເຂົາຟັງ
2:19 ສ່ວນນາງ ມາຣີອາ ກໍໄດ້ພິຈາລະນາເກັບເລື່ອງແນວໝູ່ນີ້ໄວ້ໃນໃຈຂອງນາງ
2:20 ແລ້ວພວກລ້ຽງແກະກໍໄດ້ຄືນເມືອ ພາກັນສັນລະເສີນຍົກຍ້ອງພຣະເຈົ້າທີ່ໄດ້ຮູ້
ໄດ້ເຫັນຕາມທີ່ເທວະທູດໄດ້ບອກພວກເຂົາ

2:21 ພໍໄດ້ແປດມື້ແລ້ວ ພໍ່ແມ່ພີ່ນ້ອງກໍພາກັນເຮັດພິທີຕັດໝາຍ ໂຕໃຫ້ເດັກອ່ອນ
ຕາມປະເພນີ ແລ້ວໃສ່ຊື່ວ່າ ເຢຊູ ຕາມທີ່ເທວະທູດໄດ້ບອກໄວ້ ກ່ອນທີ່ ເຢຊູ ບໍ່ທັນ
ໄດ້ຢູ່ໃນທ້ອງຂອງນາງ ມາຣີອາ
2:22 ບັດນີ້ ພໍຄົບກຳນົດການໝົດມົນທິນຂອງແມ່ລູກອ່ອນ ມາຣີອາ ແລ້ວຕາມກົດ-
ບັນຍັດທີ່ ໂມເຊ ໄດ້ຮັບມອບໄວ້ນັ້ນ ໂຢເຊບ ກັບ ມາຣີອາ ກໍນຳເອົາເດັກນ້ອຍ ເຢ-
ຊູ ໄປເມືອງ ເຢຣູຊາເລັມ ເພື່ອຖວາຍເດັກນ້ອຍ ເຢຊູ ໃຫ້ພຣະເຈົ້າຢູ່ໃນພຣະວິ-
ຫານ
2:23 (ນີ້ກໍເປັນໄປຕາມກົດບັນຍັດຂອງພຣະຜູ້ເປັນເຈົ້າທີ່ມີຂຽນໄວ້ວ່າ “ລູກຊາຍກົກ
ຄູ່ຄົນທີ່ເບີກມົດລູກ ຊິເອີ້ນວ່າ ເປັນຜູ້ບໍລິສຸດໄວ້ແດ່ພຣະເຈົ້າ”)
2:24 ແລ້ວເຂົາກໍຖວາຍເຄື່ອງບູຊາຕໍ່ພຣະເຈົ້າ ຕາມທີ່ກົດບັນຍັດຂອງພຣະຜູ້ເປັນ-
ເຈົ້າໄດ້ກຳນົດໄວ້ ວ່າ “ໃຫ້ຖວາຍນົກເຂົາຄູ່ໜຶ່ງ ຫລືວ່າ ນົກເຂົາໜຸ່ມສອງໂຕ”
2:25 ແລ້ວ ນີ້ແຫລະ ມີພໍ່ໃຫຍ່ຜູ້ໜຶ່ງຊື່ ຊີເມໂອນ ຢູ່ເມືອງ ເຢຣູຊາເລັມ ລາວ ເປັນ
ຄົນທ່ຽງທຳເຊື່ອໝັ້ນແຕ່ໃນພຣະເຈົ້າ ຊີເມໂອນ ນີ້ພວມຄອຍຖ້າແຕ່ພຣະຜູ້ໂຜດ
ຂອງພວກຄົນ ອິສະຣາເອນ ຊິມາເກີດ ແລ້ວ ພຣະວິນຍານ ຂອງພຣະເຈົ້າກໍຢູ່ນຳ
ລາວ ຕະຫລອດ
2:26 ກັບ ພຣະວິນຍານ ຂອງພຣະເຈົ້າເຄີຍເຜີຍໃຫ້ ລາວ ຮູ້ວ່າ ຊິໄດ້ເຫັນພຣະຜູ້-
ໂຜດໂລກກ່ອນທີ່ ລາວ ຊິຕາຍ
2:27 ມື້ນັ້ນ ພຣະວິນຍານ ຂອງພຣະເຈົ້າໄດ້ນຳພາ ຊີເມໂອນ ເຂົ້າໄປໃນພຣະວິ-
ຫານ ແລ້ວພໍ ມາຣີອາ ກັບ ໂຢເຊບ ພາເດັກນ້ອຍ ເຢຊູ ເຂົ້າໄປຖວາຍໃຫ້ພຣະເຈົ້າ
ຢູ່ພຣະວິຫານຕາມທີ່ມີກຳນົດໄວ້ໃນບົດບັນຍັດ
2:28 ພໍ ຊີເມໂອນ ເຫັນ ລາວ ກໍໄດ້ອຸ້ມເດັກນ້ອຍ ເຢຊູ ແລ້ວໄດ້ຍົກຍ້ອງສັນລະ-
ເສີນພຣະເຈົ້າວ່າ
2:29 “ອົງພຣະຜູ້ເປັນເຈົ້າເອີຍ ບັດນີ້ພຣະອົງໃຫ້ຜູ້ຂ້າອອກໄປໄດ້ແລ້ວດ້ວຍຄວາມ
ປີຕິຍິນດີ
2:30 ຍ້ອນວ່າ ຕາຂອງຜູ້ຂ້າໄດ້ເຫັນພຣະຜູ້ໂຜດຂອງພຣະອົງໄດ້ແລ້ວ
2:31 ຊຶ່ງພຣະອົງໄດ້ກຽມໄວ້ຕໍ່ໜ້າຕໍ່ຕາເພື່ອມວນມະນຸດທັງປວງ

2:32 ເປັນແສງສະຫວ່າງທີ່ເປີດເຜີຍຂ່າວປະເສີດໃຫ້ຊາວໂລກທັງຫລາຍຜູ້ຍັງບໍ່
ທັນຮູ້ຈັກນຳ ຊຶ່ງເປັນສະຫງ່າລາສີຂອງຊົນຊາດ ອິສະຣາເອນ ຂອງພຣະອົງ”
2:33 ແລ້ວ ໂຢເຊບ ກັບ ມາຣີອາ ແມ່ເດັກນ້ອຍກໍແປກໃຈຫລາຍໃນຄຳເວົ້າຂອງ ຊີ-
ເມໂອນ ກ່ຽວກັບເດັກນ້ອຍ ເຢຊູ ນັ້ນ
2:34 ແລ້ວ ຊີເມໂອນ ໄດ້ອວຍພອນເຂົາ ພ້ອມກັບບອກ ມາຣີອາ ແມ່ເດັກນ້ອຍວ່າ
“ນີ້ແຫລະ ຍ້ອນເດັກນ້ອຍນີ້ເອງຄົນ ອິສະຣາເອນ ຫລາຍຄົນຊິພິນາດລົງ ແລ້ວ
ອີກຫລາຍຄົນກໍຊິມີຊີວິດຂຶ້ນມາໃໝ່ ແລ້ວເດັກນ້ອຍນີ້ຊິເປັນເຄື່ອງໝາຍສຳຄັນທີ່
ຊິໂດນຫລາຍຄົນຕໍ່ວ່າ
2:35 ເອີ້ ສຳລັບໂຕເຈົ້ານີ້ຊິເຈັບໃຈຫລາຍຄືຖືກດາບແທງຫົວໃຈ ແລ້ວໃນທີ່ສຸດສະ-
ພາບຈິດໃຈຂອງຫລາຍຄົນກໍຊິຖືກເປີດເຜີຍອອກມາໃຫ້ເຫັນຄັກໆ”
2:36 ບັດນີ້ມີແມ່ໃຫຍ່ຜູ້ໜຶ່ງຊື່ວ່າ ອານາ ເປັນຜູ້ທຳນາຍຄຳພະຍາກອນ ເປັນລູກ-
ສາວຂອງ ນາຍ ຟານູເອັນ ຈາກພວກຕະກູນ ອາເຊ ລາວ ເຖົ້າຫລາຍແລ້ວເຄີຍ
ມີຜົວແຕ່ຍັງສາວ ຢູ່ນຳກັນເຈັດປີຈາກເປັນສາວບໍລິສຸດ *(ແລ້ວຜົວກໍຕາຍປະ
ລາວ )*
2:37 ບັດນີ້ ລາວ ເປັນໝ້າຍມາແປດສິບສີ່ປີ ຢູ່ແຕ່ໃນພຣະວິຫານຮັບໃຊ້ພຣະເຈົ້າ
ໝົດມື້ໝົດເວັນ ອະທິຖານເວົ້ານຳພຣະເຈົ້າອົດເຂົ້າອົດນ້ຳຢູ່ນັ້ນ
2:38 ແລ້ວແມ່ເຖົ້າ ອານາ ກໍເຂົ້າມາໃນຫວ່າງນັ້ນພໍດີ ແລ້ວຈັ່ງຂອບໃຈສັນລະເສີນ
ພຣະເຈົ້າ ແລ້ວຍາມໃດແມ່ເຖົ້າໄດ້ຮັບໃຜທີ່ມາຊອກຫາຄວາມພົ້ນໃນເມືອງ ເຢຣູ-
ຊາເລັມ ລາວ ກໍໄດ້ເວົ້າເລື່ອງພຣະຜູ້ໂຜດນັ້ນໃຫ້ເຂົາຟັງ
2:39 ບັດນີ້ ພໍ ໂຢເຊບ ກັບ ມາຣີອາ ໄດ້ເຮັດຕາມຂໍ້ຄວາມໃນບົດບັນຍັດຂອງພຣະ-
ເຈົ້າໝົດຄູ່ແນວແລ້ວ ກໍໄດ້ພາກັນກັບເມືອເມືອງ ນາຊາເຣັດ ບ້ານຂອງເຂົາຢູ່ເຂດ
ກາລິເລ
2:40 ຢູ່ມາເດັກນ້ອຍ ເຢຊູ ກໍໄດ້ໃຫຍ່ຂຶ້ນມາເປັນຄົນເຂັ້ມແຂງທາງຈິດວິນຍານ ມີ
ສະຕິປັນຍາເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລ້ວພຣະຄຸນຂອງພຣະເຈົ້າກໍຢູ່ນຳເພິ່ນ
2:41 ບັດນີ້ ພໍຮອດງານສະຫລອງມື້ທີ່ພຣະເຈົ້າກູ້ຊາດ ຢິວ ຢູ່ເມືອງ ເຢຣູຊາເລັມ ພໍ່
ແມ່ຂອງ ພຣະເຢຊູ ກໍເຄີຍໄປຮ່ວມງານຄູ່ປີ

2:42 ແລ້ວຕອນ ພຣະເຢຊູ ອາຍຸໄດ້ສິບສອງປີ ພໍ່ແມ່ກໍພາໄປນຳຕາມປະເພນີ
2:43 ບັດພໍງານສະຫລອງຈົບແລ້ວ ໝູ່ພວກເຂົາກໍຕັ້ງຕົ້ນອອກເດີນທາງຊິກັບເມືອ-
ບ້ານ ແຕ່ວ່າ ພຣະເຢຊູ ຍັງຢູ່ໃນເມືອງ ເຢຣູຊາເລັມ ຊຶ່ງພໍ່ແມ່ຂອງ ພຣະເຢຊູ ບໍ່
ຮູ້ຈັກນຳ
2:44 ພໍ່ແມ່ເລີຍຄຶດວ່າ ພຣະເຢຊູ ຄືຊິມາກັບໝູ່ພວກເຂົາ ເດີນທາງຜ່ານໄປມື້ໜຶ່ງ
ເຂົາກໍເລີຍຊອກຫານຳໝູ່ພວກ ກັບນຳພີ່ນ້ອງທີ່ມານຳກັນ
2:45 ບັດບໍ່ພົ້ກໍເລີຍຫລົບເມືອໄປຫາຢູ່ເມືອງ ເຢຣູຊາເລັມ
2:46 ແລ້ວ ໂຢເຊບ ກັບ ມາຣີອາ ກໍໄດ້ຊອກຢູ່ນັ້ນສາມມື້ເຕັມຈັ່ງມາພົ້ ພຣະເຢຊູ ຢູ່-
ໃນພຣະວິຫານ ເຫັນນັ່ງຊຸມກັນນຳພວກນັກປັດຊະຍານັກທຳທາງພຣະບັນຍັດ
ທັງຖາມທັງຟັງພວກເຂົາ
2:47 ແລ້ວຄູ່ຄົນທີ່ໄດ້ຍິນຄຳຖາມຄຳຕອບຂອງ ພຣະເຢຊູ ເຂົາກໍພາກັນເປັນຕາງຶດ
ໃນຄວາມອ້ອມຮູ້ກັບຄຳຕອບຂອງເພິ່ນ ຄືວ່າເຂົ້າໃຈຄັກແທ້
2:48 ແລ້ວພໍ ໂຢເຊບ ກັບ ມາຣີອາ ໄດ້ເຫັນ ພຣະເຢຊູ ນັ່ງຢູ່ນັ້ນ ເຂົາກໍແປກໃຈ ແລ້ວ
ມາຣີອາ ຜູ້ເປັນແມ່ໄດ້ເວົ້າວ່າ “ລູກເອີຍເປັນຫຍັງເຈົ້າເຮັດໃສ່ພໍ່ໃສ່ແມ່ແນວນີ້ ພໍ່
ແມ່ຫ່ວງໃຍຊອກຫາເຈົ້າພໍແຮງແລ້ວ”
2:49 ແຕ່ ພຣະເຢຊູ ຕອບເຂົາວ່າ “ເປັນຫຍັງຈັ່ງມາຊອກຫາຂ້ອຍ ຄືບໍ່ຮູ້ບໍ້ວ່າຂ້ອຍ
ຕ້ອງເຮັດວຽກເຮັດງານຂອງພໍ່ຂ້ອຍຢູ່ນີ້”
2:50 ບັດນີ້ ໂຢເຊບ ກັບ ມາຣີອາ ກໍເລີຍງຶງ ບໍ່ເຂົ້າໃຈຄວາມເວົ້າທີ່ ພຣະເຢຊູ ບອກ
ເຂົາ
2:51 ແລ້ວ ພຣະເຢຊູ ກໍເລີຍກັບເມືອບ້ານ ນາຊາເຣັດ ນຳພໍ່ແມ່ ແລ້ວກໍໄດ້ເຊື່ອຟັງ
ເຂົາ ແຕ່ຝ່າຍ ມາຣີອາ ຜູ້ເປັນແມ່ກໍໄດ້ເກັບເລື່ອງຄູ່ຢ່າງນີ້ໄວ້ໃນໃຈ
2:52 ແລ້ວ ພຣະເຢຊູ ກໍໄດ້ຈະເລີນເຕີບໂຕຂຶ້ນມາ ທາງກາຍ ທາງສະຕິປັນຍາ
ແລ້ວເປັນທີ່ພໍໃຈຕໍ່ພຣະເຈົ້າກັບຕໍ່ຜູ້ຄົນນຳ

# ລູກາ ບົດທີ 3

3:1 ຢູ່ມາຫລາຍປີ ເປັນປີທີ່ສິບຫ້າໃນການປົກຄອງຂອງຈັກກະພັດ ກາຍຊາຕີເບຣີ-
ໂອ ຊຶ່ງຕອນນັ້ນ ປົນຕຽວ ປີລາດ ເປັນເຈົ້າເມືອງໃຫຍ່ເໜືອແຂວງ ຢູດາຍ ເຮ-
ໂຣດ ເປັນຮອງເໜືອເຂດ ກາລີເລ ຟີລິບ ນ້ອງຊາຍຂອງ ເຮໂຣດ ເປັນຮອງເໜືອ
ເຂດ ອີຕູລາຍ ກັບເຂດ ທາໂຄນິດ ແລ້ວ ລີຊາເນຍ ເປັນຮອງເໜືອເຂດ ອາບີເລັນ
3:2 ໃນຍາມນັ້ນ ອັນນາ ກັບ ກາຍະຟາ ເປັນມະຫາປະໂລຫິດ ຕອນນັ້ນ ພຣະຄຳ
ຂອງພຣະເຈົ້າມາຍັງ ໂຢຮັນ (ລູກຊາຍຂອງ ຊາຂາຣີຢາ ) ຜູ້ອາໄສຢູ່ໃນຖິ່ນແຫ້ງ-
ແລ້ງ
3:3 ໂຢຮັນ ກໍເລີຍອອກໄປປ່າວປະກາດທົ່ວແຖວແມ່ນ້ຳ ຢໍດາເນ ບອກໃຫ້ຄົນຮັບ
ຈຸ່ມນ້ຳສະແດງການກັບໃຈໃໝ່ ເພື່ອພຣະເຈົ້າຊິໄດ້ຍົກໂທດຄວາມຜິດບາບໃຫ້
ເຂົາ
3:4 ອັນນີ້ກໍເປັນໄປຕາມຄຳທຳນາຍຂອງ ເອຊາຢາ ຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າ ທີ່ ລາວ ກ່າວໄວ້ວ່າ “ໃຫ້ກຽມທາງໄວ້ໃຫ້ພຣະເຈົ້າ ແປງທາງຂອງເພິ່ນ
ໃຫ້ມັນຊື່ກົງເດີ້
3:5 ໜ້ອງຮ່ອມພູກໍຊິຖົມໃຫ້ມັນພຽງ ພູເຂົາກັບເນີນກໍຊິຕ່ຳລົງ ທາງຄົດໂຄ້ງກໍຊິຊື່ກົງ
ກັບທາງທີ່ເປັນຫລຸມເປັນບໍ່ກໍຊິຮາບພຽງ
3:6 ແລ້ວຄົນທັງປວງກໍຊິເຫັນພຣະຜູ້ໂຜດຂອງພຣະເຈົ້າ”
3:7 ບັດນີ້ ໂຢຮັນ ນັ້ນໄດ້ເວົ້າໃສ່ຜູ້ຄົນທີ່ອອກມາຮັບຈຸ່ມນ້ຳ ວ່າ “ໄອ້ພວກຊາດຊົ່ວ
ລູກງູຮ້າຍ ແມ່ນໃຜເຕືອນໃຫ້ໜີພົ້ນຈາກການລົງໂທດຂອງພຣະເຈົ້າທີ່ຊິມານັ້ນ
3:8 ຈັ່ງຊັ້ນ ໃຫ້ພວກເຈົ້າສະແດງຜົນສົມກັບການກັບໃຈໃຈໃໝ່ອີຫລີເດີ້ ແລ້ວບໍ່
ຕ້ອງອ້າງກັນວ່າເປັນລູກຫລານຂອງ ອັບຣາຮາມ ດີບໍ່ດີເຮົາວ່າພຣະເຈົ້າສາມາດ
ບັນດານເອົາພວກກ້ອນຫີນນຳໝູ່ນີ້ຂຶ້ນມາເປັນລູກຫລານຂອງ ອັບຣາຮາມ ກໍໄດ້
3:9 ດີບໍ່ດີ ຂວານຂອງພຣະເຈົ້າໄດ້ວາງໃສ່ຮາກກົກໄມ້ແລ້ວ ຄູ່ກົກທີ່ບໍ່ເປັນໝາກ
ເປັນຜົນອັນດີ ກົກນັ້ນຊິຖືກໂຄ່ນຄ້ານຖິ້ມ ໂຍນໃສ່ໄຟກອງຮ້າ ໂລດ ”
3:10 ບັດນີ້ ພວກຄົນທີ່ອອກມາກໍຖາມລາວວ່າ “ຈັ່ງຊັ້ນ ຊິໃຫ້ພວກຂ້ອຍເຮັດແນວ
ໃດຊັ່ນ”

3:11 ແລ້ວ ໂຢຮັນ ກໍບອກພວກເຂົາວ່າ “ຄັນຜູ້ໃດມີເສື້ອສອງໂຕ ກໍປັນໃຫ້ຜູ້ບໍ່ມີ ກັບ
ຄັນຜູ້ໃດມີເຂົ້າປາອາຫານ ກໍປັນໃຫ້ຜູ້ບໍ່ມີຄືກັນ”
3:12 ແລ້ວມີພວກເກັບພາສີກໍຍັງອອກມາວ່າຊິຮັບຈຸ່ມນໍ້າຈັ່ງຖາມລາວວ່າ “ອາຈານ
ເອີຍ ຊິໃຫ້ພວກຜູ້ຂ້າເຮັດແນວໃດດີ”
3:13 ໂຢຮັນ ເລີຍຕອບວ່າ “ໃຫ້ພວກເຈົ້າເກັບພາສີຕາມຄຳສັ່ງເທົ່ານັ້ນ ຢ່າເກັບ
ເກີນເດີ້”
3:14 ແລ້ວມີພວກທະຫານໄດ້ຖາມ ໂຢຮັນ ຄືກັນວ່າ “ພວກຂ້ອຍເດ ຊິໃຫ້ເຮັດແນວ
ໃດດີ” ໂຢຮັນ ຕອບວ່າ “ຢ່າໄປຂູ່ບັງຄັບຫາຄວາມໃສ່ເພື່ອຊິກິນເງິນເຂົາ ໃຫ້ພໍໃຈ
ກັບເງິນເດືອນຂອງໂຕເດີ້”
3:15 ບັດນີ້ ພໍພວກຄົນຢູ່ນັ້ນຕື່ນໂຕ ຄາດຄິດໃນໃຈວ່າ ໂຢຮັນ ນີ້ຊິແມ່ນພຣະຜູ້-
ໂຜດນັ້ນອີຫລີຊັ່ນບໍ້
3:16 ພໍດີ ໂຢຮັນ ກໍບອກພວກເຂົາວ່າ “ເຮົານີ້ເປັນຜູ້ໃຫ້ຈຸ່ມນໍ້າໃຫ້ສະແດງການກັບ-
ໃຈໃໝ່ ແຕ່ວ່າເພິ່ນຜູ້ນັ້ນທີ່ຊິມານຳຫລັງເຮົາ ເພິ່ນມີອຳນາດແຮງຫລາຍກວ່າເຮົາ
ຄົນສ່ຳເຮົານີ້ກໍຍັງບໍ່ສົມຄວນຊິແກ້ສາຍເກີບໃຫ້ເພິ່ນຊໍ້າ ຜູ້ນັ້ນເນາະ ຊິມີຫລາຍ
ຄົນທີ່ເພິ່ນຊິຈຸ່ມດ້ວຍ ພຣະວິນຍານ ແຕ່ວ່າອີກຫລາຍຄົນເພິ່ນຊິຈຸ່ມລົງໃນໄຟ
3:17 ຄືເພິ່ນພວມຖືກະດົ້ງຂອງເພິ່ນ ແລ້ວຊິມາວີສະສາງລານເຂົ້າຂອງເພິ່ນໃຫ້
ຮຽບຮ້ອຍ ແລ້ວເກັບເອົາແຕ່ເມັດດີໆ ໄວ້ໃນເລົ້າຂອງເພິ່ນ ແຕ່ວ່າແກບນັ້ນເພິ່ນກໍ
ຊິເອົາໄປເຜົາຖິ້ມໃນໄຟທີ່ບໍ່ຮູ້ຈັກມອດ”
3:18 ແລ້ວ ໂຢຮັນ ກໍໄດ້ເວົ້າຕັກເຕືອນພວກຜູ້ຄົນ ເປັນຫລາຍອັນຫລາຍແນວ
3:19 ແຕ່ວ່າເຈົ້າເມືອງ ເຮໂຣດ ກໍບໍ່ພໍໃຈກັບ ໂຢຮັນ ຍ້ອນວ່າໄດ້ຖືກ ໂຢຮັນ ຕັກ
ເຕືອນເປີດເຜີຍເລື່ອງເປັນຊູ້ກັນກັບ ເຮໂຣເດຍ ນ້ອງໃພ້ຂອງໂຕ ກັບ ໂຢຮັນ ໄດ້
ເຜີຍຄວາມຊົ່ວແນວບໍ່ດີຂອງເພິ່ນອອກມາໝົດ
3:20 ແຕ່ຫລາຍກວ່ານັ້ນ ເຮໂຣດ ແຮງເຮັດຊົ່ວຊໍ້າຕື່ມເຂົ້າໄປອີກ ຄືໄດ້ຈັບເອົາ ໂຢ-
ຮັນ ນີ້ເຂົ້າໄປຂັງໄວ້ໃນຄຸກ

3:21 ແຕ່ກ່ອນໜ້ານັ້ນ ຫລັງຈາກປະຊາຊົນໄປຮັບຈຸ່ມນໍ້າໝົດແລ້ວ ພຣະເຢຊູ ກໍໄດ້
ໄປຮັບຄືກັນ ຮັບແລ້ວເພິ່ນໄດ້ອະທິຖານເວົ້ານຳພຣະເຈົ້າ ພວມເວົ້າຢູ່ນັ້ນ ທ້ອງຟ້າ
ກໍຖືກແຫວກອອກ
3:22 ແລ້ວ ພຣະວິນຍານ ຂອງພຣະເຈົ້າກໍສະເດັດລົງມາຄືຮູບນົກເຂົາ ແລ້ວກໍມີສຽງ
ເວົ້າມາແຕ່ເທິງຟ້າວ່າ “ເຈົ້າເປັນລູກໂທນທີ່ພໍ່ຮັກແພງ ພໍ່ຖືກໃຈໃນເຈົ້າຫລາຍ”
3:23 ແລ້ວຕອນ ພຣະເຢຊູ ອາຍຸໄດ້ປະມານສາມສິບປີ ເພິ່ນໄດ້ເລີ່ມອອກໄປຮັບໃຊ້
ງານຂອງເພິ່ນ *ໃນຖານະວ່າເປັນ ພຣະບຸດ* ແຕ່ຄົນເຂົ້າໃຈຜິດວ່າ ພຣະເຢຊູ ນີ້
ເປັນລູກຂອງ ໂຢເຊບ ຫລານຂອງ ເອລີ ຊື່ໆ
3:24 ເອລີ ເປັນລູກຊາຍຂອງ ມັດຕາເທຍ ໆ ເປັນລູກຊາຍຂອງ ເລວີ ໆ ເປັນລູກ-
ຊາຍຂອງ ເມນຄີ ໆ ເປັນລູກຊາຍຂອງ ຢານາ ໆ ເປັນລູກຊາຍຂອງ ໂຢເຊບ
3:25 ໂຢເຊບ ເປັນລູກຊາຍຂອງ ມັດຕາເທຍ ໆ ເປັນລູກຊາຍຂອງ ອາໂມດ ໆ
ເປັນລູກຊາຍຂອງ ນາຮູມ ໆ ເປັນລູກຊາຍຂອງ ເອຊະລີ ໆ ເປັນລູກຊາຍຂອງ
ນັກກາຍ
3:26 ນັກກາຍເປັນລູກຊາຍຂອງ ມາອາດ ໆ ເປັນລູກຊາຍຂອງ ມັດຕາເທຍ ໆ
ເປັນລູກຊາຍຂອງ ເຊເມອີນ ໆ ເປັນລູກຊາຍຂອງ ໂຢເຊັກ ໆ ເປັນລູກຊາຍຂອງ
ໂຢດາ
3:27 ໂຢດາ ເປັນລູກຊາຍຂອງ ໂຢຮານັນ ໆ ເປັນລູກຊາຍຂອງ ເຣຊາ ໆ ເປັນ
ລູກຊາຍຂອງ ເຊຣູບາເບັນ
3:28 ເຊຣູບາເບັນ ເປັນລູກຊາຍຂອງ ເຊອານຕີເອນ ໆ ເປັນລູກຊາຍຂອງ ເນຣີ ໆ
ເປັນລູກຊາຍຂອງ ເມນຄີ ໆ ເປັນລູກຊາຍຂອງ ອາດີ ໆ ເປັນລູກຊາຍຂອງ ໂກ-
ຊາມ ໆ ເປັນລູກຊາຍຂອງ ເອັນມາດາມ ໆ ເປັນລູກຊາຍຂອງ ເອຣະ
3:29 ເອຣະ ເປັນລູກຊາຍຂອງ ໂຢຊວຍ ໆ ເປັນລູກຊາຍຂອງ ເອລີເອເຊີ ໆ ເປັນ
ລູກຊາຍຂອງ ໂຢຣິມ ໆ ເປັນລູກຊາຍຂອງ ມັດຕາເທຍ ໆ ເປັນລູກຊາຍຂອງ
ເລວີ

3:30 ເລວີ ເປັນລູກຊາຍຂອງ ຊີເມໂອນ ໆ ເປັນລູກຊາຍຂອງ ຢູດາ ໆ ເປັນລູກ-
ຊາຍຂອງ ໂຢເຊບ ໆ ເປັນລູກຊາຍຂອງ ໂຢນາມ ໆ ເປັນລູກຊາຍຂອງ ເອລີຢາ-
ກີມ
3:31 ເອລີຢາກີມ ເປັນລູກຊາຍຂອງ ເມເລອາ ໆ ເປັນລູກຊາຍຂອງ ເມນນາ ໆ
ເປັນລູກຊາຍຂອງ ມັດຕາທາ ໆ ເປັນລູກຊາຍຂອງ ນາທັນ ໆ ເປັນລູກຊາຍຂອງ
ກະສັດ ດາວິດ
3:32ກະສັດ ດາວິດ ເປັນລູກຊາຍຂອງ ເຢຊາຍ ໆ ເປັນລູກຊາຍຂອງ ໂອເບັດ ໆ
ເປັນລູກຊາຍຂອງ ໂບອາດ ໆ ເປັນລູກຊາຍຂອງ ຊານໂມນ ໆ ເປັນລູກຊາຍ
ຂອງ ນາໂຊນ
3:33 ນາໂຊນ ເປັນລູກຊາຍຂອງ ອຳມີນາດາບ ໆ ເປັນລູກຊາຍຂອງ ອັດມີນ ໆ
ເປັນລູກຊາຍຂອງ ອານີ ໆ ເປັນລູກຊາຍຂອງ ເຮັດຊະໂຣນ ໆ ເປັນລູກຊາຍຂອງ
ເປເຣັດ ໆ ເປັນລູກຊາຍຂອງ ຢູດາ
3:34 ຢູດາ ເປັນລູກຊາຍຂອງ ຢາໂຄບ ໆ ເປັນລູກຊາຍຂອງ ອີຊາກ ໆ ເປັນລູກ-
ຊາຍຂອງ ອັບຣາຮາມ ໆ (ພໍ່ຕະກູນ ອິສະຣາເອນ )ເປັນລູກຊາຍຂອງ ເຕຣາ ໆ
ເປັນລູກຊາຍຂອງ ນາໂຮ
3:35 ນາໂຮ ເປັນລູກຊາຍຂອງ ເສຣຸກ ໆ ເປັນລູກຊາຍຂອງ ເຣອູ ໆ ເປັນລູກຊາຍ
ຂອງ ເປເລັກ ໆ ເປັນລູກຊາຍຂອງ ເອເບີ ໆ ເປັນລູກຊາຍຂອງ ເຊລາ
3:36 ເຊລາ ເປັນລູກຊາຍຂອງ ກາຍນານ ໆ ເປັນລູກຊາຍຂອງ ອາຟາກຊາດ ໆ
ເປັນລູກຊາຍຂອງ ເຊມ ໆ ເປັນລູກຊາຍຂອງ ໂນເອ ໆ (ຜູ້ເຮັດເຮືອໃຫຍ່)ເປັນ
ລູກຊາຍຂອງ ລາເມັກ
3:37 ລາເມັກ ເປັນລູກຊາຍຂອງ ເມທູເຊລາ ໆ ເປັນລູກຊາຍຂອງ ເອໂນກ ໆ ເປັນ
ລູກຊາຍຂອງ ຢາເຣັດ ໆ ເປັນລູກຊາຍຂອງ ມະຫາລາເລນ ໆ ເປັນລູກຊາຍຂອງ
ກາຍນານ
3:38 ກາຍນານ ເປັນລູກຊາຍຂອງ ເອໂນດ ໆ ເປັນລູກຊາຍຂອງ ເສດ ໆ ເປັນ
ລູກຊາຍຂອງ ອາດັມ (ບັນພະບຸລຸດຂອງຄົນເຮົາ) ອາດັມ ເປັນລູກຊາຍຂອງ
ພຣະເຈົ້າຜູ້ສ້າງໂລກນັ້ນ

# ລູກາ ບົດທີ 4

4:1 ແລ້ວຫວ່າງນັ້ນ ພຣະເຢຊູ ຊຶ່ງເຕັມດ້ວຍ ພຣະວິນຍານ ບໍລິສຸດ ໄດ້ຫລົບຄືນ
ມາແຕ່ໄປຫາ ໂຢຮັນ ຢູ່ແມ່ນໍ້າ ຢໍດາເນ ແລ້ວ ພຣະວິນຍານ ໄດ້ນຳພາເພິ່ນອອກ
ໄປຢູ່ໃນຖິ່ນແຫ້ງແລ້ງບໍລິເວນເປົ່າປ່ຽວທີ່ບໍ່ມີຄົນຢູ່
4:2 ແລ້ວຈັ່ງຖືກ ພະຍາມານ ຊາຕານທົດລອງໃຈຢູ່ນັ້ນເປັນເວລາສີ່ສິບມື້ສີ່ສິບຄືນ
ແລ້ວຫລັງຈາກນັ້ນມາ ພຣະເຢຊູ ກໍຫິວເຂົ້າແຮງຫລາຍ ຍ້ອນວ່າບໍ່ໄດ້ກິນອີຫຍັງ
ເລີຍຕະຫລອດສີ່ສິບມື້ນັ້ນ
4:3 ແລ້ວ ພະຍາມານ ຊາຕານເລີຍເວົ້າທ້າທາຍວ່າ “ຄັ່ນເຈົ້າເປັນ ພຣະບຸດ ຂອງ
ພຣະເຈົ້າອີຫລີເປັນຫຍັງຄືບໍ່ບັນດານເອົາກ້ອນຫີນນຳໝູ່ນີ້ໃຫ້ເປັນແນວກິນແໜ່”
4:4 ແຕ່ ພຣະເຢຊູ ຕອບມັນວ່າ “ມີຄຳຂອງພຣະເຈົ້າທີ່ຂຽນໄວ້ວ່າ ‘ຄົນເຮົາຊິບໍ່ໄດ້
ລ້ຽງຊີວິດດ້ວຍແນວກິນຢ່າງດຽວ ແຕ່ດ້ວຍ ພຣະຄຳ ຂອງພຣະເຈົ້າໝົດຄູ່ຕອນ
ນຳ’”
4:5 ແລ້ວ ພະຍາມານ ຊາຕານກໍພາ ພຣະເຢຊູ ຂຶ້ນໄປຢູ່ໜ້ອງສູງໆ ໃຫ້ເພິ່ນເບິ່ງ
ອານາຈັກທົ່ວໂລກທັງໝົດໃນພິບຕາດຽວ
4:6 ແລ້ວມັນບອກ ພຣະເຢຊູ ວ່າ “ສິດອຳນາດນີ້ເຮົາຊິມອບໃຫ້ເຈົ້າໄດ້ ພ້ອມທັງ
ສັກສີຂອງມັນ ຍ້ອນວ່າ ເຮົາໄດ້ຮັບມອບເປັນຂອງເຮົາຜູ້ດຽວ ແລ້ວເຮົາຊິໃຫ້ໃຜ
ກໍໄດ້ຕາມໃຈມັກຂອງເຮົາ
4:7 ຈັ່ງຊັ້ນ ຄັ່ນເຈົ້າພຽງແຕ່ຂາບໄຫວ້ບູຊາເຮົາຊື່ໆ ກໍຊິເປັນຂອງເຈົ້າໝົດ”
4:8 ແຕ່ ພຣະເຢຊູ ຕອບມັນວ່າ “ໄອ້ຊາຕານ ໄປຢູ່ຂ້າງຫລັງເຮົາແມ່ະ ມີຄຳຂອງ
ພຣະເຈົ້າຂຽນໄວ້ວ່າ ເຈົ້າຊິຂາບໄຫວ້ບູຊາແຕ່ພຣະຜູ້ເປັນເຈົ້າຂອງເຈົ້າ ແລ້ວຮັບ-
ໃຊ້ແຕ່ເພິ່ນຜູ້ດຽວເທົ່ານັ້ນ”
4:9 ແລ້ວ ພະຍາມານ ຊາຕານໄດ້ພາ ພຣະເຢຊູ ໄປ ກຸງເຢຣູຊາເລັມ ຂຶ້ນໄປວາງ
ເພິ່ນລົງຢູ່ເທິງຍອດຫຼັງຄາພຣະວິຫານ ແລ້ວເວົ້າທ້າທາຍ ພຣະເຢຊູ ອີກວ່າ “ຄັ່ນ
ເຈົ້າເປັນ ພຣະບຸດ ຂອງພຣະເຈົ້າອີຫລີກໍໂຕນລົງໄປທະແມ້
4:10 ຄືມີ ພຣະຄຳ ຂຽນໄວ້ວ່າ ‘ພຣະເຈົ້າຊິໃຫ້ພວກເທວະທູດຂອງເພິ່ນເບິ່ງແຍງ
ຮັກສາເຈົ້າໄວ້

4:11 ເອົາມືໂຈມໄວ້ບໍ່ໃຫ້ຕີນເຈົ້າກະແທກຫີນ’”
4:12 ແຕ່ ພຣະເຢຊູ ໄດ້ຕອບມັນວ່າ “ມີ ພຣະຄຳ ຂຽນໄວ້ວ່າ ‘ຢ່າລອງດູພຣະຜູ້-
ເປັນເຈົ້າ ຜູ້ເປັນນາຍຂອງເຈົ້າເດີ້’”
4:13 ພໍ ພະຍາມານ ຊາຕານພະຍາຍາມລໍ້ໃຈ ພຣະເຢຊູ ຕາມກົນອຸບາຍຂອງມັນ
ໝົດແລ້ວ ມັນກໍໜີໄປຄາວໜຶ່ງຄອຍຖ້າໂອກາດໃໝ່
4:14 ແລ້ວ ພຣະເຢຊູ ກໍຄືນເມືອເຂດ ກາລີເລ ເຕັມໄປດ້ວຍລິດອຳນາດ ພຣະວິນ-
ຍານ ຂອງພຣະເຈົ້າ ແລ້ວຊື່ສຽງຂອງເພິ່ນກໍໄດ້ຊ່າລືໄປທົ່ວເຂດອ້ອມແອ້ມແຖວ
ນັ້ນ
4:15 ແລ້ວ ພຣະເຢຊູ ກໍໄດ້ເລີ່ມສັ່ງສອນຕາມໂຮງທຳຂອງເຂົາຢູ່ແຖວນັ້ນ ແລ້ວ
ໝົດຄູ່ຄົນຈັ່ງໄດ້ຍົກຍ້ອງເພິ່ນ
4:16 ແລ້ວ ພຣະເຢຊູ ໄປຮອດບ້ານ ນາຊາເຣັດ ເປັນໝ້ອງທີ່ເພິ່ນເຄີຍຢູ່ແຕ່ນ້ອຍ ພໍ
ຮອດມື້ພັກງານຂອງພວກອິດສະຣາເອັນ ເພິ່ນໄດ້ເຂົ້າໄປໃນໂຮງທຳຕາມທີ່ເຄີຍ
ເຮັດມາ ແລ້ວໄດ້ຢືນຂຶ້ນເພື່ອຊິອ່ານ ພຣະຄຳ
4:17 ແລ້ວມີຜູ້ເອົາມ້ວນຄຳພີບູຮານຍື່ນໃຫ້ ພຣະເຢຊູ ເປັນໜັງສື ເອຊາຢາ ຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້າ ພຣະເຢຊູ ກໍຜືອອກຫາຂໍ້ຄວາມໝ້ອງທີ່ມີຂຽນໄວ້ວ່າ
4:18 “ ພຣະວິນຍານ ຂອງພຣະເຈົ້າກໍຢູ່ນຳຜູ້ຂ້າ ຍ້ອນວ່າພຣະເຈົ້າໄດ້ຕັ້ງຜູ້ຂ້ານີ້
ໄວ້ເປັນຜູ້ນຳຂ່າວດີຂອງເພິ່ນມາບອກໃຫ້ຄົນທຸກຄົນຍາກຟັງ ກັບປະກາດປ່ອຍ
ຊະເລີຍທັງຫລາຍທີ່ຖືກ ພະຍາມານ ຊາຕານຈັບຂັງໄວ້ ກັບປົວຄົນຕາບອດໃຫ້
ເຫັນຮຸ່ງໄດ້ ກັບປ່ອຍຄົນທີ່ຖືກກົດຂີ່ຂົ່ມເຫງໃຫ້ມີເສລີພາບ
4:19 ພ້ອມປະກາດເຖິງປີເລີກທີ່ພຣະເຈົ້າເລືອກໄວ້ວ່າຊິມາກະລຸນາ”
4:20 ພໍອ່ານແລ້ວ ພຣະເຢຊູ ກໍມ້ວນໜັງສືນັ້ນສົ່ງຄືນໃຫ້ເຈົ້າໜ້າທີ່ໂຮງທຳ ແລ້ວກໍ
ໄປນັ່ງຢູ່ ຕາຄູ່ຄົນທີ່ຢູ່ໃນນັ້ນກໍພາກັນຈໍ່ງເບິ່ງເພິ່ນ
4:21 ແລ້ວ ພຣະເຢຊູ ບອກເຂົາວ່າ “ຄຳທຳນາຍຂອງ ເອຊາຢາ ທີ່ເຮົາອ່ານໃຫ້ຟັງນີ້
ໄດ້ເປັນໄປແລ້ວ ໄດ້ຮອດມື້ຮອດຍາມມັນແລ້ວໃນມື້ນີ້”

4:22 ບັດນີ້ ຄູ່ຄົນຢູ່ນັ້ນ ໄດ້ຊົມເຊີຍຍົກຍ້ອງ ພຣະເຢຊູ ແປກໃຈເປັນຕາງຶດໃນ
ຄວາມເວົ້າອັນເພາະຫູເປັນຕາຟັງຂອງເພິ່ນ ພວກເຂົາກໍເລີຍຖາມກັນວ່າ "ຜູ້ນີ້ບໍ່
ແມ່ນລູກຊາຍຂອງ ໂຢເຊບ ບໍ້"
4:23 ແລ້ວ ພຣະເຢຊູ ບອກເຂົາວ່າ "ທັນທີພວກເຈົ້າເວົ້າດີຢູ່ດອກ ແຕ່ຕໍ່ໄປນີ້ຊິເວົ້າ
ວ່າ 'ເຈົ້າຜູ້ເປັນນາຍແພດເລີດໃຫ້ປົວໂຕເອງໃນຖິ່ນຂອງເຈົ້ານີ້ຊະ ຄືກັນກັບທີ່
ເຮົາໄດ້ຂ່າວວ່າເຄີຍເຮັດໃນເມືອງ ກາເປນາອູມ '"
4:24 ແລ້ວເພິ່ນບອກວ່າ "ແທ້ຈິງແລ້ວ ບໍ່ເຄີຍມີຜູ້ເປັນປາກເປັນສຽງຂອງພຣະເຈົ້າ
ຈັກຄົນທີ່ໄທບ້ານໄທເມືອງຂອງເຂົາທີ່ເຄີຍຍອມຮັບນັບຖືໃນຖິ່ນຖານຂອງໂຕ
4:25 ເຮົາຊິເວົ້າຕາມຊື່ນີ້ເນາະ ໃນສະໄໝ ເອລີຢາ ນັ້ນ ຕອນແຜ່ນດິນອິດສະຣາ-
ເອນເກີດແຫ້ງແລ້ງໄປທົ່ວ ຄືຝົນບໍ່ຕົກຢູ່ສາມປີຫົກເດືອນ ຈັ່ງເກີດການອຶດຢາກໝ
າກຫິວ ແລ້ວຍາມນັ້ນມີແມ້ໝ້າຍຫລາຍຄົນໃນ ອິສະຣາເອນ
4:26 ແຕ່ພຣະເຈົ້າບໍ່ໄດ້ໃຊ້ ເອລີຢາ ໄປຊ່ອຍພວກແມ້ໝ້າຍພວກນັ້ນເລີຍ ມີແຕ່ໃຊ້
ລາວ ໄປຊ່ອຍແມ້ໝ້າຍຜູ້ໜຶ່ງຢູ່ບ້ານ ຊາເຣຟັດ ໃນແຂວງເມືອງ ຊີໂດນ
4:27 ແລ້ວໃນສະໄໝ ເອລີຊາ ຜູ້ເປັນປາກເປັນສຽງຂອງພຣະເຈົ້ານັ້ນ ມີຫລາຍຄົນ
ໃນ ອິສະຣາເອນ ເປັນຂີ້ທູດ ແຕ່ພຣະເຈົ້າບໍ່ໄດ້ໃຊ້ ເອລີຊາ ໃຫ້ປົວພວກເຂົາຈັກ
ຄົນເລີຍ ມີແຕ່ໃຊ້ໄປຊ່ອຍປົວ ນາອາມານ ຊຶ່ງເປັນຜູ້ບັນຊາການກອງທັບໃນປະ-
ເທດ ຊີເຣຍ "
4:28 ບັດນີ້ ພໍພວກຄົນທີ່ຢູ່ໃນໂຮງທຳຟັງ ພຣະເຢຊູ ເວົ້າແນວນີ້ແລ້ວ ເຂົາກໍເກີດ
ຢາກຮ້າຍຢ່າງແຮງ
4:29 ແລ້ວເຂົາຈັ່ງລຸກຂຶ້ນຂັບໄລ່ ພຣະເຢຊູ ໃຫ້ອອກຈາກເມືອງເຂົາ ນຳໄປຮອດ
ໜ້າຜາຢູ່ແຄມເມືອງ ວ່າຊິໂຍນເພິ່ນລົງໄປເລີຍ
4:30 ແຕ່ ພຣະເຢຊູ ໄດ້ຍ່າງຜ່າກາງພວກເຂົາ ໄປຕາມທາງຂອງເພິ່ນຕໍ່
4:31 ແລ້ວ ພຣະເຢຊູ ໄດ້ໄປເມືອງ ກາເປນາອູມ ຢູ່ເຂດ ກາລີເລ ແລ້ວໄດ້ສອນ
ພວກເຂົາໃນມື້ພັກງານ
4:32 ແລ້ວໝົດຄູ່ຄົນທີ່ໄດ້ຟັງກໍເປັນຕາງຶດ ຍ້ອນເພິ່ນສັ່ງສອນຢ່າງມີສິດອຳນາດອິ-
ທລິ

4:33 ບັດນີ້ມີຜູ້ຊາຍຜູ້ໜຶ່ງໃນໂຮງທຳ ມີຜີໂສໂຄກເຂົ້າສິງ ແລ້ວໄດ້ພາອອກປາກ
ຮ້ອງຢ່າງແຮງວ່າ
4:34 “ໂອ໋ ພຣະເຢຊູ ຊາວ ນາຊາເຣັດ ເອີຍ ຂໍຢ່າມາຫຍຸ້ງກັບພວກຜູ້ຂ້າທ້ອນ ພວກ
ຜູ້ຂ້າມີອີຫຍັງກັບທ່ານບໍ້ ຊິມາທຳລາຍພວກຜູ້ຂ້າບໍ້ ພວກຜູ້ຂ້າຮູ້ຈັກທ່ານແລ້ວ
ທ່ານຄືຜູ້ບໍລິສຸດຂອງພຣະເຈົ້າຜູ້ນັ້ນເນາະ”
4:35 ແລ້ວ ພຣະເຢຊູ ໄດ້ຫ້າມມັນໄວ້ວ່າ “ງຽບແມະ ອອກມາຈາກເຂົາດຽວນີ້” ພໍ
ພຣະເຢຊູ ສັ່ງແລ້ວ ມັນກໍເຮັດໃຫ້ຜູ້ຊາຍຜູ້ນັ້ນລົ້ມລົງ ແຕ່ມັນບໍ່ໄດ້ເຮັດອີຫຍັງໃສ່
ເຂົາ
4:36 ບັດນີ້ ໝົດຄູ່ຄົນຢູ່ນັ້ນກໍງຶດຢ່າງໃຫຍ່ ຕ່າງຄົນຕ່າງເວົ້າວ່າ “ຄວາມເວົ້າຂອງ
ຄົນນີ້ເປັນຈັ່ງໃດຄືມີລິດມີອຳນາດແທ້ ເພິ່ນສັ່ງພວກຜີໂສໂຄກ ແລ້ວມັນກໍອອກມາ
ໂລດ ”
4:37 ແລ້ວຊື່ສຽງຂອງ ພຣະເຢຊູ ໄດ້ຊ່າລືໄປທົ່ວຄູ່ໝ້ອງໃນເຂດອ້ອມແອ້ມແຖວນັ້ນ
4:38 ບັດນີ້ ພຣະເຢຊູ ກໍອອກຈາກໂຮງທຳ ແລ້ວເຂົ້າໄປເຮືອນຂອງ ຊີໂມນ ຄືແມ່
ເຖົ້າຂອງ ຊີໂມນ ເປັນໄຂ້ແຮງ ແລ້ວເຂົາໄດ້ຂໍໃຫ້ ພຣະເຢຊູ ມາປົວ ລາວ
4:39 ພຣະເຢຊູ ກໍເລີຍໄປຢືນຢູ່ໃກ້ແມ່ເຖົ້າຂອງ ຊີໂມນ ແລ້ວສັ່ງຫ້າມພິດໄຂ້ ມັນກໍ
ເລີຍອອກຈາກຜູ້ ລາວ ເລີຍລຸກຂຶ້ນ ໂລດ ຮັບໃຊ້ພວກຄົນທີ່ຢູ່ນັ້ນ
4:40 ພໍຍາມມື້ແລງ ຜູ້ໃດທີ່ມີພໍ່ແມ່ພີ່ນ້ອງເຈັບເປັນຍ້ອນມີໂລກມີໄພຕ່າງໆ ກໍໄດ້
ພາກັນມາຫາ ພຣະເຢຊູ ແລ້ວເພິ່ນກໍເອົາມືວາງໃສ່ຄູ່ຄົນ ປົວໃຫ້ເຊົາເປັນດີໝົດ
4:41 ຜູ້ໃດຖືກຜີເຂົ້າສິງຢູ່ ຜີນັ້ນກໍອອກມາພ້ອມຮ້ອງກັນວ່າ “ເຈົ້າເປັນ ພຣະບຸດ
ຂອງພຣະເຈົ້າ ເຈົ້າເປັນ ພຣະບຸດ ຂອງພຣະເຈົ້າ” ແຕ່ ພຣະເຢຊູ ຫ້າມມັນໄວ້ບໍ່ໃຫ້
ເວົ້າ ຍ້ອນວ່າພວກມັນຮູ້ຈັກວ່າ ພຣະເຢຊູ ເປັນ ພຣະຄຣິດ ພຣະຜູ້ໂຜດທີ່ລົງມາ
ກະລຸນາຄົນບາບ
4:42 ພໍຕື່ນມື້ເຊົ້າມາ ພຣະເຢຊູ ກໍໄດ້ອອກໄປ ແລ້ວແວະເຂົ້າຢູ່ໝ້ອງງຽບໆ ໝ້ອງ
ໜຶ່ງ ແຕ່ໄທບ້ານໄທເມືອງກໍໄດ້ນຳຫາເພິ່ນຈົນພໍ້ ແລ້ວພະຍາຍາມໃຫ້ເພິ່ນຄືນເມືອ
ນຳ ບໍ່ຢາກໃຫ້ເພິ່ນໜີຈາກເຂົາ

4:43 ແຕ່ວ່າ ພຣະເຢຊູ ບອກພວກເຂົາວ່າ “ເຮົາຈຳເປັນຕ້ອງໄປບອກເລື່ອງລາຊະ-
ອານາຈັກຂອງພຣະເຈົ້າໃຫ້ພວກໄທບ້ານໄທເມືອງອື່ນໆ ຮູ້ຈັກນຳ ຄືພຣະເຈົ້າໄດ້
ໃຊ້ເຮົາມາຍ້ອນເຫດນີ້ເນາະ”
4:44 ແລ້ວ ພຣະເຢຊູ ກໍໄດ້ອອກໄປບອກໄປສອນເລື່ອງລາຊະອານາຈັກຂອງ-
ພຣະເຈົ້າໃຫ້ຄົນຟັງຕາມໂຮງທຳໃນເຂດ ກາລິເລ

# ລູກາ ບົດທີ 5

5:1 ຢູ່ມາມັນເປັນໄປທີ່ວ່າ ພວກປະຊາຊົນໄດ້ເຂົ້າມາບຽດອ້ອມແອ້ມເພື່ອຟັງ ພຣະ-
ເຢຊູ ສອນ ພຣະຄຳ ຂອງພຣະເຈົ້າ ທີ່ເພິ່ນກໍຢືນຢູ່ຣິມທະເລ ເຄັນເນຊາເຣັດ
5:2 ພຣະເຢຊູ ເລີຍຫລຽວເຫັນເຮືອສອງລຳຈອດໄວ້ຢູ່ຣິມນ້ຳ ແລ້ວໄທເຮືອພວມ
ລ້າງອວນຢູ່ໃກ້ໆ ນັ້ນ
5:3 ພຣະເຢຊູ ເລີຍໄປນັ່ງເທິງເຮືອລຳໜຶ່ງ ເປັນເຮືອຂອງ ຊີໂມນເປໂຕ ແລ້ວໄດ້
ບອກໃຫ້ ລາວ ຖອຍເຮືອອອກໄປໃຫ້ຈັກໜ່ອຍ ແລ້ວ ພຣະເຢຊູ ກໍໄດ້ນັ່ງລົງສອນ
ປະຊາຊົນຈາກເຮືອນັ້ນ
5:4 ບັດສອນແລ້ວ ພຣະເຢຊູ ໄດ້ຊວນ ຊີໂມນເປໂຕ ວ່າ “ໃຫ້ອອກໄປຢ່ອນອວນລົງ
ເອົາປາຢູ່ໜ້ອງເລິກໆ ເຖາະ”
5:5 ແຕ່ ຊີໂມນເປໂຕ ບອກເພິ່ນວ່າ “ນາຍເອີຍ ພວກຜູ້ຂ້າໄດ້ພາກັນເຮັດໝົດຄືນ
ຈົນຊອດແຈ້ງ ແຕ່ບໍ່ໄດ້ປາຈັກໂຕ ກໍຕາມຜູ້ຂ້າຊິໄປຢ່ອນອວນອີກຕາມທີ່ນາຍ
ບອກ”
5:6 ພໍເຮັດແລ້ວ ພວກເຂົາກໍໄດ້ປາຫລາຍຂະໜາດ ຈົນອວນຊິຂາດ
5:7 ເຂົາເລີຍກວັກມືເອີ້ນໝູ່ຜູ້ຮ່ວມງານໃຫ້ເອົາເຮືອມາຊ່ອຍເອົາປາ ພວກເຂົາໄດ້
ປາຫລາຍຂະໜາດຈົນເຮືອຊິຈົມທັງສອງລຳ
5:8 ພໍ ຊີໂມນເປໂຕ ໄດ້ເຫັນຈັ່ງຊັ້ນກໍຂາບຕໍ່ໜ້າ ພຣະເຢຊູ ໂລດ ແລ້ວເວົ້າວ່າ
“ນາຍເອີຍ ຜູ້ຂ້າເປັນຄົນບາບຫລາຍ ຂໍຢ່າມາໃກ້ຜູ້ຂ້າທ້ອນ”
5:9 ຊີໂມນເປໂຕ ເວົ້າຈັ່ງຊີ້ຍ້ອນວ່າ ລາວ ຕົກໃຈງຶດຫລາຍທີ່ໄດ້ປາຫລາຍຄືນີ້

5:10 ແລ້ວໝູ່ພວກທີ່ຫາປານຳ ລາວ ນັ້ນ ຄື ຢາໂກໂບ ກັບ ໂຢຮັນ (ລູກຊາຍຂອງ
ເຊເບດາຍ ) ກໍຕົກໃຈງຶດຄືກັນ ແລ້ວ ພຣະເຢຊູ ບອກ ຊີໂມນເປໂຕ ວ່າ “ຢ່າສູ່ຢ້ານ
ເດີ້ ເຈົ້າເຄີຍຫາປາໃຫ້ໂຕເອງ ແຕ່ນີ້ໄປເຈົ້າຊິຫາຄົນໃຫ້ພຣະເຈົ້າ”
5:11 ພໍຮອດຝັ່ງແລ້ວ ພວກເຂົາໄດ້ພາກັນປະເຮືອຖິ້ມໄວ້ນັ້ນ ພ້ອມກັບຂອງແນວ
ອື່ນໆ ໄວ້ທັງໝົດ ແລ້ວໄປກັບ ພຣະເຢຊູ ເປັນລູກສິດຂອງເພິ່ນ
5:12 ຢູ່ມາຕອນ ພຣະເຢຊູ ຢູ່ໃນເມືອງໜຶ່ງ ນີ້ແຫລະ ໄດ້ມີຜູ້ຊາຍຜູ້ໜຶ່ງເປັນຂີ້ທູດ
ເຕັມໂຕ ພໍເຫັນ ພຣະເຢຊູ ກໍໄດ້ມາກົ້ມກາບໜ້າລົງຮອດດິນ ອ້ອນວອນ ພຣະເຢຊູ
ວ່າ “ນາຍເອີຍ ຄັ່ນມີນໍ້າໃຈຊິຊ່ອຍໃຫ້ຜູ້ຂ້າໝົດມົນທິນເຊົາເປັນດີ ຜູ້ຂ້າໝັ້ນໃຈວ່າ
ນາຍເຮັດໄດ້”
5:13 ພຣະເຢຊູ ເລີຍຍື່ນມືແຕະໃສ່ຜູ້ຊາຍຜູ້ນັ້ນແລ້ວເວົ້າວ່າ “ເຮົາມີນໍ້າໃຈຊິຊ່ອຍຢູ່
ແລ້ວ ໃຫ້ໝົດມົນທິນເຊົາເປັນດີຊະເດີ້” ພໍເພິ່ນເວົ້າແລ້ວຜູ້ຊາຍນັ້ນກໍໝົດຂີ້ທູດ
ເຊົາເປັນດີກັບໝ້ອງ ໂລດ
5:14 ແລ້ວ ພຣະເຢຊູ ກໍສັ່ງຜູ້ຊາຍນັ້ນໄວ້ວ່າ “ຢ່າສູ່ຟ້າວບອກໃຜເດີ້ ແຕ່ໃຫ້ຈັດເອົາ
ເຄື່ອງບູຊາໝົດມົນທິນພະຍາດຂີ້ທູດ ແລ້ວໃຫ້ນຳໄປຫາພວກປະໂລຫິດ ໂລດ
ເພື່ອເປັນຫຼັກຖານພະຍານໃຫ້ເຂົາຕາມທີ່ບົດບັນຍັດໜັງສື ໂມເຊ ບອກໄວ້ນັ້ນ”
5:15 ຈັ່ງໃດກໍຕາມ ຊື່ສຽງຂອງ ພຣະເຢຊູ ແຮງຊ່າລືໄປໜ້າ ຈັ່ງມີຄົນຫລວງຫລາຍ
ຫລັ່ງໄຫລມາຟັງ ພຣະເຢຊູ ກັບໃຫ້ເພິ່ນປົວໂລກໃຫ້ນຳ
5:16 ພຣະເຢຊູ ເພິ່ນເຄີຍອອກໄປໃນຖິ່ນແຫ້ງແລ້ງເປັນປະຈຳ ເພື່ອຊິອະທິຖານ
ເວົ້ານຳພຣະເຈົ້າຢູ່ຜູ້ດຽວ
5:17 ຢູ່ມາມື້ໜຶ່ງ ຕອນ ພຣະເຢຊູ ພວມສັ່ງສອນປະຊາຊົນຢູ່ ໄດ້ມີພວກຄະນະ ຟາ-
ຣີຊາຍ ກັບນັກທຳ* ຜູ້ລາງຄົນຈາກຄູ່ບ້ານໃນເຂດ ກາລີເລ ເຂດ ຢູດາຍ ກັບ
ເມືອງ ເຢຣູຊາເລັມ ກໍມານັ່ງຢູ່ນຳ ແລ້ວລິດອຳນາດຂອງພຣະຜູ້ເປັນເຈົ້າທີ່ຊິປົວ
ຄົນເຈັບກໍຢູ່ນຳ ພຣະເຢຊູ
5:18 ບັດນີ້ ນີ້ແຫລະ ໄດ້ມີຄົນລ່ອຍຜູ້ໜຶ່ງໝູ່ຫາມໃສ່ທີ່ນອນມາ ພວກເຂົາພະຍາ-
ຍາມຫາທາງຊິເຂົ້າໄປວາງລົງຕໍ່ໜ້າ ພຣະເຢຊູ

* ນັກທຳເປັນອາຈານ ພຣະທຳ ພຣະເຈົ້າ

5:19 ແຕ່ພໍເຫັນວ່າບໍ່ມີທາງຫວ່າງທີ່ຊິນຳເອົາເຂົ້າມາຍ້ອນມີຄົນຫລວງຫລາຍ
ພວກເຂົາກໍເລີຍຂຶ້ນໄປເທິງຫຼັງຄາເຮືອນ ແລ້ວກໍເປີດປ່ອງອອກ ຢ່ອນທັງຄົນເຈັບ
ທັງທີ່ນອນ ລົງໄປວາງລົງຕໍ່ໜ້າ ພຣະເຢຊູ ຢູ່ຫວ່າງກາງພວກຄົນຢູ່ຫັ້ນ
5:20 ພໍ ພຣະເຢຊູ ເຫັນຄວາມເຊື່ອໝູ່ຂອງຄົນລ່ອຍ ເພິ່ນເລີຍເວົ້າກັບຄົນລ່ອຍວ່າ
"ຜູ້ຊາຍເອີຍ ບາບກຳເວນຂອງເຈົ້ານັ້ນເຮົາຍົກໂທດໃຫ້ໝົດແລ້ວ"
5:21 ບັດນີ້ ພໍພວກຄະນະ ຟາຣີຊາຍ ກັບນັກທຳໄດ້ຍິນ ພຣະເຢຊູ ເວົ້າຈັ່ງຊັ່ນ ກໍພາ-
ກັນຄຶດໃນໃຈວ່າ "ແມ່ນໃຜຜູ້ນີ້ ຄືຍົກໂຕເວົ້າໝິ່ນປະມາດລົບຫລູ່ພຣະເຈົ້າແທ້ ບໍ່ມີ
ໃຜຍົກໂທດບາບກຳເວນໃຫ້ນອກຈາກພຣະເຈົ້າຜູ້ດຽວເທົ່ານັ້ນ"
5:22 ແຕ່ວ່າ ພຣະເຢຊູ ຮູ້ຈັກຄວາມຄຶດໃນໃຈຂອງພວກເຂົາ ເລີຍເວົ້າກັບເຂົາວ່າ
"ເປັນຫຍັງຄືພາກັນຄຶດຈັ່ງຊີ້
5:23 ແນວໃດຊິເວົ້າງ່າຍກວ່າກັນ 'ເຮົາຍົກໂທດບາບກຳເວນໃຫ້ແລ້ວ' ຫລືຊິເວົ້າວ່າ
'ໃຫ້ລຸກຂຶ້ນຍ່າງໄປ ໂລດ ເດີ້'
5:24 ແຕ່ເຮົາໄດ້ເວົ້າຈັ່ງຊັ່ນເພື່ອພວກເຈົ້າຊິຮູ້ວ່າ ເຮົາຜູ້ເປັນບຸດມະນຸດນັ້ນ ມີສິດ
ອຳນາດຍົກໂທດບາບກຳເວນໃຫ້ຄົນໄດ້" ເວົ້າແລ້ວ ພຣະເຢຊູ ຫລຽວມາເວົ້າກັບ
ຄົນລ່ອຍອີກວ່າ "ລຸກຂຶ້ນເກັບເອົາທີ່ນອນຍ່າງເມືອບ້ານເຈົ້າສາ"
5:25 ແລ້ວຄົນລ່ອຍນັ້ນ ກໍລຸກຂຶ້ນກັບໜ້ອງຕໍ່ໜ້າພວກເຂົາ ແລ້ວກໍເກັບເອົາສາດ
ເອົາເສື່ອຍ່າງເມືອບ້ານ ແລ້ວຈັ່ງຂອບໃຈສັນລະເສີນພຣະເຈົ້າຢູ່ເລື້ອຍ
5:26 ພວກຄົນຢູ່ນັ້ນກໍແປກໃຈເປັນຕາງຶດ ທັງຍົກຍ້ອງພຣະເຈົ້າທັງພາກັນຢ້ານນຳ
ແລ້ວກໍເວົ້າກັນວ່າ "ມື້ນີ້ເນາະເຮົາໄດ້ເຫັນແນວເຫລືອເຊື່ອແລ້ວ"
5:27 ຫລັງຈາກແນວໝູ່ນີ້ເກີດຂຶ້ນ ພຣະເຢຊູ ກໍໄດ້ອອກໄປ ແລ້ວສັງເກດເຫັນຄົນ
ເກັບພາສີຜູ້ໜຶ່ງຊື່ວ່າ ເລວີ ນັ່ງຢູ່ດ່ານເກັບພາສີ ພຣະເຢຊູ ເລີຍຊວນ ເລວີ ວ່າ
"ໃຫ້ຕາມມາເປັນລູກສິດເຮົາເຖາະ"
5:28 ແລ້ວ ເລວີ ກໍລຸກຂຶ້ນຕິດຕາມເປັນລູກສິດຂອງເພິ່ນ
5:29 ແລ້ວ ເລວີ ກໍໄດ້ຈັດງານລ້ຽງໃຫຍ່ຢູ່ເຮືອນໂຕເອງ ເພື່ອເປັນກຽດໃຫ້ ພຣະເຢ-
ຊູ ມີໝູ່ພວກເກັບພາສີກັບອີກຫລາຍຄົນໄດ້ມາຮ່ວມໂຕະກິນນຳກັນ

5:30 ບັດນີ້ພວກຄະນະ ຟາຣີຊາຍ ກັບນັກທຳໄດ້ເວົ້າໂຈມຕີພວກລູກສິດຂອງ
ພຣະເຢຊູ ເຂົາເລີຍເວົ້າໃສ່ວ່າ “ເປັນຫຍັງພວກເຈົ້າຈັ່ງຮ່ວມໂຕະກິນກັບພວກຄົນ
ເກັບພາສີກັບຄົນຂີ້ບາບແນວນີ້”
5:31 ພຣະເຢຊູ ກໍເລີຍບອກພວກເຂົາວ່າ “ຄົນຢູ່ດີມີແຮງບໍ່ຕ້ອງການໝໍດອກ ມີແຕ່
ຄົນເຈັບຄົນເປັນທີ່ຕ້ອງການໝໍ
5:32 ຄືເຮົາບໍ່ໄດ້ມາເອີ້ນຄົນທີ່ຖືວ່າດີແລ້ວ ແຕ່ມາເອີ້ນຄົນຂີ້ບາບໃຫ້ສຳນຶກໂຕກັບ-
ໃຈໃໝ່”
5:33 ແລ້ວພວກຄະນະ ຟາຣີຊາຍ ກັບນັກທຳເວົ້າໃສ່ ພຣະເຢຊູ ວ່າ “ເປັນຫຍັງລູກ-
ສິດຂອງ ໂຢຮັນ ກັບລູກສິດຂອງພວກຄະນະ ຟາຣີຊາຍ ເນັ້ນໜັກໃນການຖືສິນ
ອົດອາຫານກັບການອະທິຖານ ແຕ່ລູກສິດຂອງເຈົ້ານີ້ມີແຕ່ກິນກັບດື່ມແທ້”
5:34 ພຣະເຢຊູ ໄດ້ຕອບເຂົາວ່າ “ແມ່ນໃຜຊິບັງຄັບໝູ່ເຈົ້າບ່າວຖືອົດກິນຍາມເຈົ້າ-
ບ່າວຍັງຢູ່ນຳເຂົາ
5:35 ແຕ່ຊິມີມື້ມາທີ່ເຈົ້າບ່າວຊິຖືກຄົນເອົາຈາກເຂົາໄປ ຮອດຍາມນັ້ນພວກເຂົາຊິຖື
ອົດກິນ”
5:36 ແລ້ວ ພຣະເຢຊູ ໄດ້ເວົ້າຄຳປຽບທຽບໃຫ້ເຂົາຟັງວ່າ “ບໍ່ມີໃຜເຄີຍຈີກເອົາທ່ອນ
ຂອງເສື້ອໂຕໃໝ່ນັ້ນມາຕາບໃສ່ເສື້ອໂຕເກົ່າ ຄັນເຮັດຈັ່ງຊັ້ນເສື້ອໂຕໃໝ່ເສຍຖິ້ມ
ຊື່ໆ ແລ້ວຜ້າທ່ອນໃໝ່ກັບເສື້ອໂຕເກົ່າມັນກໍບໍ່ເຂົ້າກັນ
5:37 ແລ້ວອີກວ່າ ບໍ່ມີໃຜເຄີຍເອົາເຫລົ້າອະງຸ່ນທີ່ເຮັດອອກມາໃໝ່ໆ ມາໃສ່ຖົງໜັງ
ເກົ່າໄວ້ ຄັນເຮັດຈັ່ງຊັ້ນເຫລົ້າອະງຸ່ນໃໝ່ນັ້ນບັດພວມດອງມັນກໍຊິຂະຫຍາຍອອກ
ດັນຖົງໜັງເກົ່າຈົນແຕກ ແລ້ວເຫລົ້າອະງຸ່ນໃໝ່ກໍຊິໄຫລອອກໄປ ພ້ອມຖົງໜັງເກົ່າ
ກໍຊິເສຍໄປນຳ
5:38 ແຕ່ວ່າເຫລົ້າອະງຸ່ນທີ່ເຮັດອອກມາໃໝ່ກໍຕ້ອງໃສ່ຖົງໜັງໃໝ່ມັນຈັ່ງແມ່ນ ແລ້ວ
ທັງສອງກໍເກັບຮັກສາໄວ້ບໍ່ເສຍຫາຍ
5:39 ກັບບໍ່ເຄີຍມີໃຜດອກທີ່ໄດ້ກິນເຫລົ້າອະງຸ່ນເກົ່າແລ້ວ ແລ້ວຊິຄຶດຢາກກິນ
ເຫລົ້າອະງຸ່ນໃໝ່ ເຂົາຕ້ອງຫາວ່າຂອງເກົ່າດີກວ່າ ແມ່ນບໍ່ເນາະ”

# ລູກາ ບົດທີ 6

6:1 ຢູ່ມາ ມັນເປັນໄປທີ່ວ່າ ມື້ພັກງານຂອງພວກຢິວມື້ໜຶ່ງ ພຣະເຢຊູ ພາພວກລູກ-
ສິດຍ່າງຜ່ານທົ່ງນາໄປ ລູກສິດເພິ່ນກໍໄດ້ເດັດຮວງເຂົ້າເກັດກິນ
6:2 ບັດນີ້ ຜູ້ລາງຄົນໃນພວກຄະນະ ຟາຣີຊາຍ ເລີຍທ້ວງພວກລູກສິດ ພຣະເຢຊູ
ວ່າ “ເປັນຫຍັງຄືເຮັດແນວທີ່ບົດບັນຍັດຫ້າມໄວ້ໃນມື້ພັກງານຈັ່ງຊີ້”
6:3 ພຣະເຢຊູ ເລີຍຕອບພວກເຂົາວ່າ “ບໍ່ເຄີຍອ່ານເລື່ອງກະສັດ ດາວິດ ໃນ ພຣະ-
ຄຳ ບໍ້ ມີຍາມໜຶ່ງຕອນ ລາວ ຍັງເປັນນາຍທະຫານຢູ່ ດາວິດ ກັບທະຫານຂອງ
ເພິ່ນຫິວເຂົ້າຫລາຍ
6:4 ທີ່ວ່າ ດາວິດ ໄດ້ເຂົ້າໄປເອົາເຂົ້າຈີ່ອັນເປັນທີ່ສັກສິດຢູ່ໃນເຕັນວິຫານນັ້ນ ແລ້ວ
ເອົາມາປັນກັນກິນກັບໝູ່ທະຫານເພິ່ນ ຊຶ່ງຕາມຈິງແລ້ວບໍ່ມີໃຜມີສິດກິນໄດ້ ນອກ
ຈາກພວກປະໂລຫິດບູຊາເທົ່ານັ້ນ”
6:5 ແລ້ວ ພຣະເຢຊູ ບອກເຂົາອີກວ່າ “ເຮົາຜູ້ເປັນບຸດມະນຸດໄດ້ເປັນນາຍຂອງມື້-
ພັກງານນີ້ຢູ່ແລ້ວ”
6:6 ແລ້ວຢູ່ມາ ຮອດມື້ພັກງານຂອງພວກຢິວອີກມື້ໜຶ່ງ ພຣະເຢຊູ ກໍໄດ້ໄປສອນໃນ
ໂຮງທຳຂອງພວກຢິວອີກ ມື້ນັ້ນມີຜູ້ຊາຍຜູ້ໜຶ່ງມືຂວາລີບໄດ້ເຂົ້າໄປຟັງນຳ
6:7 ບັດນີ້ ພວກຄະນະ ຟາຣີຊາຍ ກັບພວກນັກທຳກໍຊອມເບິ່ງ ພຣະເຢຊູ ຢູ່ນັ້ນ ວ່າ
ເພິ່ນຊິຮັກສາຄົນມືລີບໃນມື້ພັກງານຫລືບໍ່ ເພື່ອຊິມີຂໍ້ຄະດີຈັບຜິດ ພຣະເຢຊູ ໄດ້
6:8 ແຕ່ວ່າ ພຣະເຢຊູ ຮູ້ຈັກຄວາມຄຶດຂອງເຂົາແລ້ວ ເພິ່ນເລີຍບອກຄົນມືລີບນັ້ນ
ວ່າ “ໃຫ້ອອກມາຢືນຢູ່ທາງນີ້ເດີ້” ແລ້ວຄົນມືລີບກໍເລີຍອອກມາຢືນຢູ່
6:9 ແລ້ວ ພຣະເຢຊູ ກໍເວົ້າກັບພວກຄະນະ ຟາຣີຊາຍ ກັບນັກທຳຢູ່ນັ້ນວ່າ “ເຮົາຊິ
ຖາມພວກເຈົ້າເດີ້ ໃນບົດບັນຍັດສອນວ່າແນວໃດ ໃນມື້ພັກງານນີ້ຄວນຊິເຮັດດີ
ຊ່ອຍຄົນຫລືວ່າຄວນຊິເຮັດຊົ່ວທຳລາຍຄົນ”
6:10 ເວົ້າແລ້ວ ພຣະເຢຊູ ກໍຫລຽວເບິ່ງໜ້າໝົດຄູ່ຄົນຖ້າຟັງຄຳຕອບຂອງພວກເຂົາ
ແລ້ວເພິ່ນກໍບອກຄົນມືລີບນັ້ນວ່າ “ຢຽດມືຂອງເຈົ້າອອກມາ” ພໍຢຽດມືອອກກໍເຊົາ
ລີບດີຄືມືຊ້າຍ

6:11 ບັດນີ້ ພວກຄະນະ ຟາຣີຊາຍ ກັບນັກທຳແຮງຮ້າຍຢ່າງເຕັມທີ່ ພວກເຂົາເລີຍ
ປຶກສາຫາລືກັນວ່າຊິຈັດການແນວໃດກັບ ພຣະເຢຊູ
6:12 ໃນຕອນນັ້ນ ພຣະເຢຊູ ໄດ້ອອກໄປຂຶ້ນພູເຂົາເພື່ອອະທິຖານເວົ້ານຳພຣະເຈົ້າ
ໄດ້ເວົ້າກັບພຣະເຈົ້າຢູ່ນັ້ນໝົດຄືນຈົນຊອດແຈ້ງ
6:13 ພໍຮອດຍາມມື້ເຊົ້າມາ ພຣະເຢຊູ ໄດ້ເອີ້ນພວກລູກສິດທີ່ຢູ່ນັ້ນມາຮ່ວມກັນ
ແລ້ວເລືອກເອົາສິບສອງຄົນ ຕັ້ງໄວ້ເປັນທູດພິເສດຂອງເພິ່ນ
6:14 ຄື ຊີໂມນ (ທີ່ ພຣະເຢຊູ ຕັ້ງອີກຊື່ວ່າ ເປໂຕ) ອັນເດອາ (ນ້ອງຊາຍ ລາວ
ນັ້ນ) ຢາໂກໂບ ໂຢຮັນ ຟີລິບ ບາຣະໂທໂລມາຍ
6:15 ມັດທາຍ ໂທມາ ຢາໂກໂບ (ລູກຂອງ ອາລະຟາຍ) ຊີໂມນ ເຊໂລເຕ
6:16 ຢູດາ (ລູກຊາຍຂອງ ຢາໂກໂບ) ແລ້ວກໍ ຢູດາ-ອິດສະກາຣີອົດ (ຊຶ່ງຜູ້ນີ້
ເນາະ ທີ່ທໍລະຍົດ ພຣະເຢຊູ)
6:17 *ພໍຕັ້ງທູດພິເສດແລ້ວ* ພຣະເຢຊູ ກໍພາກັນລົງມາ ແວະໜ້ອງຮາບໜ້ອງໜຶ່ງ
ໜ້ອງນັ້ນມີລູກສິດອີກຫລາຍຄົນ ກັບພວກຄົນອີກຫລວງຫລາຍທີ່ມາຈາກທົ່ວ
ເຂດ ຢູດາຍ ກັບເມືອງ ເຢຣູຊາເລັມ ກັບມາຈາກເມືອງທີ່ຕິດຝັ່ງທະເລ ຄືເມືອງ
ຕີເຣ ກັບ ຊີໂດນ ຄົນພວກນີ້ມາເພື່ອຟັງ ພຣະເຢຊູ ກັບເພື່ອໃຫ້ເພິ່ນປົວໂລກ
ຕ່າງໆ ຂອງເຂົາ
6:18 ແລ້ວມີຄົນທີ່ເປັນທຸກເປັນຮ້ອນ ຍ້ອນຖືກຜີໂສໂຄກເຮັດໃສ່ ພວກນີ້ໄດ້ຮັບ
ການປົວຈາກ ພຣະເຢຊູ ຄືກັນ
6:19 ແລ້ວຄົນຫລວງຫລາຍຄູ່ຄົນຢູ່ນັ້ນກໍພະຍາຍາມເຂົ້າໄປແຕະໄປຕ້ອງ ພຣະເຢ-
ຊູ ຍ້ອນວ່າມີລິດອອກຈາກໂຕເພິ່ນ ປົວເຂົາໃຫ້ເຊົາເປັນດີໝົດຄູ່ຄົນ
6:20 ແລ້ວ ພຣະເຢຊູ ໄດ້ຫລຽວເບິ່ງລູກສິດຂອງເພິ່ນ ບອກເຂົາວ່າ “ຜູ້ໃດ *ໃນພວກ
ເຈົ້າ* ທຸກຍາກລຳບາກ *ຍ້ອນເຫັນແກ່ເຮົາ* ກໍໄດ້ພົບເປັນສຸກ ຍ້ອນວ່າລາຊະອາ-
ນາຈັກຂອງພຣະເຈົ້າເປັນຂອງເຈົ້າແລ້ວ
6:21 ແລ້ວຜູ້ໃດ *ໃນພວກເຈົ້າ* ພວມອຶດຢາກໝາກທິວໃນປະຈຸບັນ *ຍ້ອນເຫັນແກ່
ເຮົາ* ກໍໄດ້ພົບເປັນສຸກ ຍ້ອນວ່າເຈົ້າຊິໄດ້ອີ່ມໜຳສຸກສະບາຍ ກັບວ່າຜູ້ໃດ *ໃນ*

*ພວກເຈົ້າ* ທີ່ອຸກອັ່ງຮ້ອງໄຫ້ໃນປະຈຸບັນ *ຍ້ອນເຫັນແກ່ເຮົາ* ກໍໄດ້ພົບເປັນສຸກ
ຍ້ອນວ່າເຈົ້າຊິຍິ້ມແຍ້ມແຈ່ມໃສຫົວໄດ້
6:22 ແລ້ວຜູ້ໃດ *ໃນພວກເຈົ້າ* ທີ່ຖືກຄົນຄຽດຊັງ ບໍ່ໃຫ້ຄົບຫາ ຂັບໄລ່ໃສໜີ ທຳລາຍ
ຊື່ສຽງ ວ່າເຈົ້າເປັນຄົນຊົ່ວຍ້ອນເຫັນແກ່ເຮົາຜູ້ເປັນບຸດມະນຸດ ກໍໄດ້ພົບເປັນສຸກ
6:23 ກໍໃຫ້ເຈົ້າດີໃຈເຕັ້ນສະຫຍອງໄວ້ ໂລດ ໃນມື້ນັ້ນ ຍ້ອນວ່າບຳເໜັດຂອງເຈົ້າໃນ
ສະຫວັນກໍຫລາຍອີຫລີ ຄືໃນສະໄໝກ່ອນພໍ່ແມ່ຂອງພວກນີ້ເຄີຍເຮັດໃສ່ພວກຜູ້-
ເປັນປາກເປັນສຽງຂອງພຣະເຈົ້າຄືກັນ
6:24 ແຕ່ວ່າລະວັງພິນາດເດີ້ ພວກເຈົ້າຜູ້ຮັ່ງມີໃນປະຈຸບັນເອີຍ ຄວາມສຸກສະບາຍ
ຂອງເຈົ້າກໍຊິໝົດທໍ່ນີ້ແລ້ວ
6:25 ລະວັງພິນາດເດີ້ ພວກເຈົ້າຜູ້ທີ່ອີ່ມທ້ອງອີ່ມໄສ້ ຍ້ອນວ່າພວກເຈົ້າຊິອຶດຢາກ
ໝາກຫິວ ແລ້ວລະວັງພິນາດເດີ້ ພວກເຈົ້າຜູ້ທີ່ຍິ້ມທີ່ຫົວໄດ້ໃນປະຈຸບັນ ຍ້ອນວ່າ
ພວກເຈົ້າຊິໂສກເສົ້າອຸກອັ່ງຮ້ອງໄຫ້
6:26 ລະວັງພິນາດເດີ້ ບັດຄົນຍົກຍ້ອງເວົ້າດີນຳເຈົ້າ ຄືໃນສະໄໝກ່ອນພໍ່ແມ່ຂອງ
ພວກນີ້ເຄີຍເຮັດດີຍົກຍ້ອງຜູ້ພະຍາກອນບໍ່ຈິງຄືກັນ
6:27 ແຕ່ເຮົາບອກພວກເຈົ້າທີ່ໄດ້ຍິນນີ້ ໃຫ້ຮັກສັດຕູຂອງເຈົ້າເດີ້ ແລ້ວເຮັດດີນຳຜູ້ທີ່
ຊັງເຈົ້າ
6:28 ກັບໃຫ້ອວຍພອນຄົນທີ່ປ້ອຍດ່າເຈົ້າເດີ້ ແລ້ວອະທິຖານເພື່ອຄົນທີ່ດູຖູກເອົາ-
ປຽບເຈົ້າ
6:29 ຄັ່ນໃຜຕົບແກ້ມຂອງເຈົ້າ ກໍໃຫ້ຫັນອີກຂ້າງໜຶ່ງໃຫ້ເຂົານຳ ແລ້ວຄັ່ນໃຜມາຍຶດ
ເອົາເສື້ອຄຸມຂອງເຈົ້າໄປເປັນຂອງໂຕ ຢ່າປະຕິເສດເຂົາຄັ່ນມາເອົາເສື້ອນອກ
ຂອງເຈົ້າໄປນຳ
6:30 ແລ້ວຄັ່ນໃຜມາຂໍອີຫຍັງນຳເຈົ້າກໍໃຫ້ເຂົາສາ ກັບຄັ່ນໃຜມາຖືເອົາມາຍຶດເອົາ
ຂອງໆ ເຈົ້າໄປກໍຢ່າທວງຄືນເດີ້
6:31 ແລ້ວຄັ່ນເຈົ້າຢາກໃຫ້ຄົນເຮັດດີນຳເຈົ້າແນວໃດ ກໍໃຫ້ເຈົ້າເຮັດດີນຳເຂົາແນວ
ນັ້ນຄືກັນ

6:32 ແລ້ວຄັ່ນເຈົ້າຮັກແພງແຕ່ຄົນທີ່ຮັກແພງເຈົ້າເທົ່ານັ້ນ ມັນຊິມີຄຸນຄ່າອີຫຍັງສຳ-
ລັບເຈົ້າ ພວກຄົນຂີ້ບາບທີ່ບໍ່ຮູ້ຈັກພຣະເຈົ້າກໍຮັກແພງກັນແນວນັ້ນຢູ່ແລ້ວ
6:33 ແລ້ວຄັ່ນເຈົ້າເຮັດດີນຳແຕ່ຄົນທີ່ເຮັດດີນຳເຈົ້າເທົ່ານັ້ນ ມັນຊິມີຄຸນຄ່າອີຫຍັງ
ສຳລັບເຈົ້າ ພວກຄົນຂີ້ບາບທີ່ບໍ່ຮູ້ຈັກພຣະເຈົ້າກໍເຮັດແນວນັ້ນຢູ່ແລ້ວ
6:34 ແລ້ວຄັ່ນເຈົ້າໃຫ້ຢືມແຕ່ຄົນທີ່ເຈົ້າຫວັງຊິໄດ້ຄືນເທົ່ານັ້ນ ມັນຊິມີຄຸນຄ່າອີຫຍັງ
ສຳລັບເຈົ້າ ພວກຄົນຂີ້ບາບທີ່ບໍ່ຮູ້ຈັກພຣະເຈົ້າກໍເຮັດແນວນັ້ນຢູ່ແລ້ວ
6:35 ແຕ່ວ່າ ໃຫ້ເຈົ້າຮັກສັດຕູຂອງເຈົ້າເດີ້ ເຮັດດີນຳເຂົາ ກັບໃຫ້ຢືມຂອງເຈົ້າໄປ
ໂດຍບໍ່ຫວັງຊິເອົາຄືນຄັ່ນເຈົ້າເຮັດຈັ່ງຊັ້ນລາງວັນທີ່ພຣະເຈົ້າຊິຕອບສະໜອງເຈົ້າ
ຊິຫລາຍຂະໜາດ ແລ້ວມັນຈັ່ງສົມກັບວ່າເຈົ້າເປັນລູກຂອງພຣະເຈົ້າຜູ້ສູງສຸດ
ຍ້ອນວ່າພຣະເຈົ້າມີໃຈເມດຕາປານີຕໍ່ຄົນຊົ່ວກັບຄົນທີ່ເນລະຄຸນເພິ່ນ
6:36 ຈັ່ງຊັ້ນ ໃຫ້ເຈົ້າມີໃຈເມດຕາປານີຄືກັນກັບພຣະເຈົ້າຜູ້ເປັນພໍ່ຂອງເຈົ້ານັ້ນເດີ້
6:37 ຢ່າຕັດສິນປະມານຄ່າຄົນອື່ນເດີ້ ແລ້ວເຈົ້າຈັ່ງຊິບໍ່ຖືກຄົນອື່ນຕັດສິນປະມານ-
ຄ່າເຈົ້າ ຢ່າກ່າວຫາໃສ່ໂທດຄົນອື່ນເດີ້ ແລ້ວເຈົ້າຈັ່ງຊິບໍ່ຖືກຄົນອື່ນກ່າວຫາໃສ່
ໂທດເຈົ້າ ໃຫ້ເຈົ້າໃຫ້ອະໄພຍົກໂທດຄົນອື່ນເດີ້ ແລ້ວເຈົ້າຈັ່ງຊິໄດ້ຮັບການໃຫ້ອະ-
ໄພຍົກໂທດຄືກັນ
6:38 ບັດເຈົ້າໃຫ້ອີຫຍັງເຂົາ ກໍໃຫ້ດ້ວຍຄວາມເຕັມໃຈເດີ້ ແລ້ວເຈົ້າກໍຊິໄດ້ຮັບມາ
ຢ່າງຍັດສັ່ນແໜ້ນພູນ ຢ່າງເຕັມເຫລືອລົ້ນ ຫຸ້ມເທຄືນມາໃຫ້ເຈົ້າ ຄືຕວງທີ່ເຈົ້າໃຫ້
ເຂົານັ້ນຊິນ້ອຍໃຫຍ່ສ່ຳໃດ ເຈົ້າຊິໄດ້ຮັບຄືນໂດຍຕວງນ້ອຍໃຫຍ່ສ່ຳນັ້ນ”
6:39 ພໍເວົ້າແລ້ວ ພຣະເຢຊູ ກໍໄດ້ຍົກເລື່ອງຂໍ້ຄຶດໃຫ້ເຂົາຟັງວ່າ “ເປັນໄປໄດ້ບໍ້ທີ່ຄົນ
ຕາບອດຊິຈູງຄົນຕາບອດໄປໃຫ້ຖືກທາງ ເຂົາທັງສອງຊິພາກັນຫລົງທາງຕົກຮ່ອງ
ຕົກຄອງບໍ່ແມ່ນບໍ້
6:40 ບໍ່ມີລູກສິດຄົນໃດທີ່ຊິໃຫຍ່ກວ່າຄູເຈົ້າຂອງດອກ ແຕ່ຄັ່ນຝຶກໂຕອົບຮົມຢ່າງ
ເຕັມທີ່ ອາດ ຊິສ່ຳຄູກໍໄດ້
6:41 ແລ້ວເປັນຫຍັງທີ່ເຈົ້າມັກຈ້ອງເບິ່ງຂີ້ເຫຍື້ອເມັດນ້ອຍໆ ໃນຕາພີ່ນ້ອງ ແຕ່ບໍ່ໄດ້
ສັງເກດທ່ອນໄມ້ໃນຕາເຈົ້າຂອງ

6:42 ຫລືເປັນຫຍັງທີ່ເຈົ້າເວົ້າກັບພີ່ນ້ອງເຈົ້າວ່າ ພີ່ນ້ອງເອີຍຂ້ອຍຂໍຊ່ອຍເອົາຂີ້-
ເຫຍື້ອເມັດນ້ອຍໆ ອອກຈາກຕາໃຫ້ເຈົ້າເດີ້ ແຕ່ເຈົ້າບໍ່ຮູ້ເນື່ອໂຕວ່າຕາຂອງເຈົ້າມີ
ທ່ອນໄມ້ໃຫຍ່ຂວາງຢູ່ໃນຕາຂອງເຈົ້າ ໄອ້ຜູ້ໜ້າຊື່ໃຈຄົດເອີຍ ໃຫ້ເຈົ້າຖອນເອົາ
ທ່ອນໄມ້ໃຫຍ່ນັ້ນອອກຈາກຕາຂອງໂຕຊະກ່ອນ ແລ້ວເຈົ້າຈັ່ງຊິເຫັນຊັດພໍທີ່ຊິ
ຊ່ອຍເອົາຂີ້ເຫຍື້ອເມັດນ້ອຍໆ ນັ້ນ ອອກຈາກຕາພີ່ນ້ອງໄດ້
6:43 ແລ້ວບໍ່ເຄີຍມີກົກໄມ້ພັນດີໆ ທີ່ອອກໝາກມາເປັນພັນບໍ່ດີດອກ ກັບບໍ່ເຄີຍມີ
ກົກໄມ້ພັນບໍ່ດີທີ່ອອກໝາກມາເປັນພັນດີໆ ໄດ້
6:44 ຍ້ອນວ່າ ຊິຮູ້ຈັກກົກໄມ້ຄູ່ກົກ ເບິ່ງອອກໄດ້ດ້ວຍໝາກຂອງມັນ ຄືບໍ່ເຄີຍມີໃຜ
ປີດເອົາໝາກເດື່ອຈາກກົກໜາມ ຫລືໝາກອະງຸ່ນຈາກພຸ່ມໄມ້ມີໜາມ
6:45 ຄືວ່າ ຄົນດີມັກຊິເອົາແຕ່ແນວດີອອກມາຈາກຄັງຫົວໃຈອັນດີຂອງເຂົາ ແລ້ວ
ຄົນຊົ່ວຊິເອົາແຕ່ແນວຊົ່ວອອກມາຈາກຄັງໃຈອັນຊົ່ວຂອງເຂົາ ສະຫລຸບແລ້ວ ຄັງ
ໃຈຂອງແຕ່ລະຄົນເຕັມລົ້ນໄປທາງໃດກໍຊິຄາຍອອກຈາກປາກຂອງເຂົາ ໂລດ
6:46 ແລ້ວເປັນຫຍັງພວກເຈົ້າຄືເອີ້ນເຮົາວ່າ ນາຍຊີວິດຜູ້ຂ້າໆ ແຕ່ບໍ່ຍອມເຮັດຕາມ
ແນວທີ່ເຮົາບອກນັ້ນ
6:47 ຄືຜູ້ໃດກໍຕາມທີ່ມາຫາເຮົາ ແລ້ວຮັບຟັງ ແລ້ວຍອມເຮັດຕາມຖ້ອຍຄໍາຂອງ
ເຮົານັ້ນ ເຮົາກໍຊິປຽບທຽບເຂົາແນວນີ້
6:48 ວ່າ ເຂົາປຽບຄືຄົນທີ່ສ້າງເຮືອນ ຊຶ່ງເຂົາໄດ້ຂູດລົງໄປຕັ້ງຮາກຖານເທິງຕິດຕໍ່-
ລ້ານຫີນໄວ້ກ່ອນ ແລ້ວບັດເກີດພາຍຸແຮງນໍ້າທ່ວມ ກະແສນໍ້າໄຫລຊັດມາໃສ່
ເຮືອນນັ້ນກໍຊິບໍ່ເປັນຫຍັງ ຍ້ອນວ່າເຈົ້າຂອງເຮືອນໄດ້ຕັ້ງເທິງຕິດຕໍ່ລ້ານຫີນ
6:49 ແຕ່ວ່າຄົນທີ່ໄດ້ຮັບຟັງຖ້ອຍຄໍາຂອງເຮົາແຕ່ບໍ່ເຮັດຕາມ ຜູ້ນັ້ນປຽບຄືຄົນທີ່ສ້າງ
ເຮືອນ ຕັ້ງໄວ້ເທິງດິນຊາຍຊື່ໆ ຊຶ່ງບໍ່ມີຮາກຖານອີຫຍັງ ແລ້ວບັດກະແສນໍ້າໄຫລ
ຊັດມາໃສ່ ເຮືອນຫລັງນັ້ນ ມັນກໍພັງທະລາຍລົ້ມລົງໝົດ ໂລດ ”

## ລູກາ ບົດທີ 7

7:1 ບັດນີ້ ພໍ ພຣະເຢຊູ ເວົ້າເລື່ອງນີ້ໃຫ້ພວກຄົນນັ້ນຟັງແລ້ວ ເພິ່ນກໍເລີຍເຂົ້າເມືອງ
ກາເປນາອູມ

7:2 ໃນເມືອງນັ້ນມີນາຍຮ້ອຍທະຫານ ໂຣມ ຜູ້ໜຶ່ງ ໄດ້ມີຂ້າທາດຮັບໃຊ້ທີ່ ລາວ
ຮັກແພງຫລາຍປ່ວຍໃກ້ຊິຕາຍແລ້ວ
7:3 ພໍນາຍຮ້ອຍໄດ້ຍິນເຖິງຊື່ສຽງຂອງ ພຣະເຢຊູ ລາວກໍເລີຍວານຜູ້ອາວຸໂສຜູ້
ລາງຄົນຂອງພວກຢິວໄປອ້ອນວອນ ພຣະເຢຊູ ໃຫ້ມາຊ່ອຍປົວຄົນໃຊ້ຂອງນາຍ
ຮ້ອຍນັ້ນ
7:4 ພໍຜູ້ອາວຸໂສນັ້ນໄປຮອດແລ້ວ ພວກເຂົາກໍອ້ອນວອນຕໍ່ ພຣະເຢຊູ ວ່າ “ນາຍ
ຮ້ອຍທະຫານຜູ້ນີ້ ສົມຄວນທີ່ຊິໄປຊ່ອຍ ລາວ
7:5 ຍ້ອນວ່າ ລາວ ຮັກຊາດ ອິສະຣາເອນ ຂອງເຮົາອີຫລີ ຈັ່ງໄດ້ອອກເງິນສ້າງ
ໂຮງທຳໃຫ້”
7:6 ບັດນີ້ ພຣະເຢຊູ ກໍເລີຍຕັ້ງໜ້າໄປເຮືອນນາຍຮ້ອຍນຳພວກຜູ້ອາວຸໂສນັ້ນ ແຕ່-
ວ່າບັດໃກ້ຊິຮອດແລ້ວ ນາຍຮ້ອຍກໍໃຊ້ໝູ່ອອກໄປລັດ ພຣະເຢຊູ ຝາກຄວາມໄປ
ບອກເພິ່ນວ່າ “ຜູ້ຂ້າຄຶດເບິ່ງແລ້ວວ່າ ຜູ້ຂ້າເປັນຄົນບໍ່ສົມຄວນທີ່ຊິລົບກວນທ່ານ
ໃຫ້ເຂົ້າມາໃນເຮືອນຂອງຜູ້ຂ້າ
7:7 ຈັ່ງຊັ້ນ ຜູ້ຂ້າຄຶດອີກວ່າຜູ້ຂ້າບໍ່ສົມຄວນທີ່ຊິມາລົບກວນທ່ານ ຜູ້ຂ້າຂໍທ່ານພຽງ
ແຕ່ອອກຄຳສັ່ງແລ້ວຄົນໃຊ້ຂອງຜູ້ຂ້າກໍຊິເຊົາເປັນດີ
7:8 ຄືຜູ້ຂ້າຢູ່ໃຕ້ວິໄນຂອງທະຫານ ແລ້ວກໍມີທະຫານຢູ່ໃຕ້ຄຳສັ່ງຂອງຜູ້ຂ້າອີກ ຜູ້-
ຂ້າອອກຄຳສັ່ງໃຫ້ໄປກໍຕ້ອງໄປ ບອກໃຫ້ມາກໍຕ້ອງມາ ບອກໃຫ້ເຮັດຫຍັງກໍຕ້ອງ
ເຮັດຕາມຄຳສັ່ງຂອງຜູ້ຂ້າ”
7:9 ພໍ ພຣະເຢຊູ ໄດ້ຍິນໝູ່ນາຍຮ້ອຍເວົ້າໃຫ້ຟັງ ເພິ່ນກໍຄັກໃຈນຳນາຍຮ້ອຍຫລາຍ
ເລີຍຫລຽວໄປເວົ້າໃຫ້ພວກຄົນທີ່ຕາມເພິ່ນມາຟັງວ່າ “ນີ້ແຫລະ ຂະໜາດຄົນ ອິ-
ສະຣາເອນ ແທ້ໆ ເຮົາຍັງບໍ່ເຄີຍພໍ້ໃຜທີ່ມີຄວາມເຊື່ອໝັ້ນໃນເຮົາຂະໜາດນີ້ເລີຍ”
7:10 ແລ້ວບັດໝູ່ນາຍຮ້ອຍຫລົບເມືອ ພໍຮອດເຮືອນແລ້ວກໍເຫັນຄົນໃຊ້ຂອງນາຍ
ຮ້ອຍເຊົາພະຍາດເປັນດີແລ້ວ
7:11 ບັດນີ້ ພໍມື້ໃໝ່ມາ ພຣະເຢຊູ ກໍເຂົ້າໃນເມືອງໜຶ່ງ ຊື່ວ່າເມືອງ ນາອີນ ແລ້ວມີ
ພວກລູກສິດຫລາຍຄົນແຫ່ໄປນຳເພິ່ນ ພ້ອມທັງພວກຄົນຫລວງຫລາຍນຳ

7:12 ພໍໃກ້ຊິຮອດປະຕູກຳແພງເມືອງ ນີ້ແຫລະ ມີຄົນພວມຫາມສົບຂອງໜຸ່ມຜູ້ໜຶ່ງ
ອອກມາ ເປັນລູກຊາຍຄົນດຽວຂອງແມ້ໝ້າຍຄົນໜຶ່ງ ແລ້ວກໍມີຊາວເມືອງຫລວງ-
ຫລາຍແຫ່ກັນອອກມານຳແມ້ໝ້າຍນັ້ນ
7:13 ພໍ ພຣະເຢຊູ ເຫັນແມ້ໝ້າຍກໍຄຶດອີຕົນຫລາຍ ເລີຍບອກເຂົາວ່າ “ບໍ່ຕ້ອງຮ້ອງ-
ໄຫ້ດອກປ້າເອີຍ”
7:14 ແລ້ວ ພຣະເຢຊູ ກໍໄດ້ຍ່າງເຂົ້າໄປແຕະໂລງສົບ ແລ້ວພວກຄົນທີ່ພວມຫາມສົບ
ຜູ້ຊາຍນັ້ນກໍຢຸດຢືນຢູ່ ແລ້ວ ພຣະເຢຊູ ກໍສັ່ງສົບຄົນຕາຍນັ້ນວ່າ “ທ້າວເອີຍ ລຸກຂຶ້ນ
ມາເດີ້”
7:15 ເວົ້າແລ້ວຜູ້ຕາຍນັ້ນກໍມີຊີວິດຄືນມາ ລຸກນັ່ງເລີ່ມຊິເວົ້າຢູ່ ແລ້ວ ພຣະເຢຊູ ເລີຍ
ມອບໜຸ່ມຜູ້ຕາຍນັ້ນຄືນໃຫ້ແມ່
7:16 ບັດນີ້ ໝົດຄູ່ຄົນຢູ່ນັ້ນກໍແຕກຕື່ນເກີດຢ້ານ ແລ້ວຍົກຍ້ອງຖວາຍກຽດພຣະເຈົ້າ
ວ່າ “ສາທຸເດີ້ ພຣະເຈົ້າໄດ້ລົງມາຢ້ຽມຊົນຊາດຂອງເພິ່ນແລ້ວ ຄືມີຜູ້ເປັນປາກ-
ເປັນສຽງຜູ້ຍິ່ງໃຫຍ່ຂອງເພິ່ນມາຢ້ຽມຍາມພວກຜູ້ຂ້າແລ້ວ”
7:17 ແລ້ວຊື່ສຽງຂອງ ພຣະເຢຊູ ໃນເລື່ອງນີ້ໄດ້ຊ່າລືອອກໄປທົ່ວເຂດ ຢູດາຍ ກັບ
ເຂດອ້ອມແອ້ມແຖວນັ້ນນຳ
7:18 ແລ້ວພວກລູກສິດຂອງ ໂຢຮັນ ໄດ້ໄປຣາຍງານແນວທີ່ເປັນໄປຫັ້ນໃຫ້ ໂຢຮັນ
ຟັງ
7:19 ໂຢຮັນ ເລີຍໃຊ້ລູກສິດສອງຄົນໄປຖາມ ພຣະເຢຊູ ວ່າ “ນາຍເປັນພຣະຜູ້ໂຜດ
ທີ່ພວກຂ້ອຍພວມຖ້າຢູ່ນັ້ນບໍ້ ຫລືວ່າພວກຂ້ອຍຊິຕ້ອງຄອງຖ້າຜູ້ອື່ນອີກ”
7:20 ພໍພວກລູກສິດຂອງ ໂຢຮັນ ໄປຮອດ ພຣະເຢຊູ ແລ້ວຈຶ່ງເວົ້າວ່າ “ ໂຢຮັນ ຜູ້ໃຫ້
ຈຸ່ມນ້ຳນັ້ນໄດ້ໃຊ້ພວກຜູ້ຂ້າມາຖາມທ່ານວ່າ ‘ທ່ານເປັນພຣະຜູ້ໂຜດທີ່ຊິມາຢູ່ນັ້ນບໍ້
ຫລືວ່າພວກຜູ້ຂ້າຊິຕ້ອງຄອງຖ້າຜູ້ອື່ນອີກ’”
7:21 ແລ້ວໃນໂມງນັ້ນເອງ ພຣະເຢຊູ ໄດ້ປົວອີກຫລາຍຄົນ ໃຫ້ເຊົາເປັນດີຈາກ
ພະຍາດຫລາຍແນວ ທັງຂັບໄລ່ຜີອອກ ທັງປົວຄົນຕາບອດໃຫ້ເຫັນໄດ້
7:22 ພຣະເຢຊູ ເລີຍຝາກຄວາມໄປກັບລູກສິດຂອງ ໂຢຮັນ ວ່າ “ໃຫ້ໄປບອກ ໂຢ-
ຮັນ ເຖິງແນວທີ່ໄດ້ຍິນໄດ້ເຫັນວ່າ ຄົນຕາບອດກໍເຫັນຮຸ່ງແລ້ວ ຄົນຂາລ່ອຍກໍຍ່າງ

ໄດ້ ຄົນຂີ້ທູດກໍກັ່ງງສະອາດແລ້ວ ຄົນຫູໜວກໄດ້ຍິນຊັດແລ້ວ ຄົນຕາຍແລ້ວກໍຍັງ
ຄືນມາມີຊີວິດອີກຄືເກົ່າ ກັບຄົນຍາກຄົນຈົນໄດ້ຮັບຟັງເລື່ອງຂ່າວດີລາຊະອານາ-
ຈັກຂອງພຣະເຈົ້ານຳ
7:23 ຜູ້ໃດທີ່ບໍ່ສະດຸດໃຈຍ້ອນເຮົາ ຜູ້ນັ້ນກໍຊິໄດ້ພົບເປັນສຸກ"
7:24 ພໍລູກສິດຂອງ ໂຢຮັນ ເມືອແລ້ວ ພຣະເຢຊູ ກໍເລີ່ມເວົ້າກັບພວກຄົນທັງຫລາຍ
ເຖິງ ໂຢຮັນ ນັ້ນວ່າ "ບັດພວກເຈົ້າພາກັນອອກໄປໃນຖິ່ນແຫ້ງແລ້ງນັ້ນ ໄດ້ອອກ
ໄປຫາເບິ່ງຫຍັງແໜ່ ໄປຫາເບິ່ງຄົນອ່ອນແອບໍ້ ຄືໄມ້ອໍ້ຖືກລົມພັດໂຍກໄປໂຍກມາ
ບໍ້
7:25 ພວກເຈົ້າອອກໄປຫາເບິ່ງຫຍັງ ໄປຫາເບິ່ງຄົນແຕ່ງໂຕຢ່າງດີ ໃສ່ເສື້ອເນື້ອຜ້າ
ອ່ອນນວນລາຄາແພງໆ ບໍ້ ຄົນທີ່ແຕ່ງໂຕງາມໆ ແນວນັ້ນ ມີແຕ່ຢູ່ຢ່າງສະບາຍໆ
ໃນວັງຂອງກະສັດນັ້ນເນາະ
7:26 ພວກເຈົ້າວ່າຊິໄປເບິ່ງຄົນແບບໃດ ໄປຫາເບິ່ງຜູ້ເປັນປາກເປັນສຽງຂອງພຣະ-
ເຈົ້າບໍ້ ລາວ ເປັນກໍແມ່ນຢູ່ ແຕ່ວ່າ ລາວ ແຮງເປັນຫລາຍກວ່າຜູ້ເປັນປາກເປັນສຽງ
ອີກ
7:27 ໂຢຮັນ ນີ້ເນາະ ໄດ້ມີຄຳຂຽນໄວ້ທີ່ພຣະເຈົ້າເວົ້າເຖິງວ່າ 'ນີ້ແຫລະ ເຮົາຊິໃຊ້ຜູ້
ຮັບໃຊ້ຂອງເຮົາອອກໄປກ່ອນເຈົ້າ ເພື່ອແປງທາງໄວ້ໃຫ້ເຈົ້າສະເດັດມາ'
7:28 ຄື ເຮົາຊິບອກພວກເຈົ້າວ່າ ບໍ່ມີໃຜສຳຄັນກວ່າ ໂຢຮັນ ຜູ້ໃຫ້ຈຸ່ມນ້ຳໃນໝູ່ຄົນ
ທັງຫລາຍທີ່ເກີດມາ ແຕ່ວ່າຜູ້ໃດກໍຕາມ ບໍ່ວ່າຊິເປັນຜູ້ນ້ອຍໆກວ່າໝູ່ໃນລາຊະ-
ອານາຈັກຂອງພຣະເຈົ້າ ຜູ້ນັ້ນຊິສຳຄັນຫລາຍກວ່າ ໂຢຮັນ ອີກ"
7:29 ພໍພວກປະຊາຊົນຮ່ວມກັນທັງພວກເກັບພາສີໄດ້ຍິນ ພຣະເຢຊູ ເວົ້າຈັ່ງຊັ່ນ
ພວກເຂົາກໍໄດ້ພາກັນຍົກຍ້ອງພຣະເຈົ້າວ່າເພິ່ນເຮັດແຕ່ແນວເປັນທຳ ຍ້ອນວ່າ
ພວກເຂົານີ້ເຄີຍອອກໄປຮັບຈຸ່ມນ້ຳນຳ ໂຢຮັນ
7:30 ແຕ່ວ່າພວກຄະນະ ຟາຣີຊາຍ ກັບພວກນັກທຳປະຕິເສດຈຸດປະສົງອັນດີງາມ
ຂອງພຣະເຈົ້າທີ່ເພິ່ນມີໄວ້ເພື່ອເຂົານັ້ນ ຍ້ອນວ່າພວກເຂົາບໍ່ຍອມກັບໃຈໄປຮັບ
ຈຸ່ມນ້ຳນຳ ໂຢຮັນ *(ຊຶ່ງສະແດງການກັບໃຈໃໝ່)*
7:31 ພຣະເຢຊູ ກໍເວົ້າຕໍ່ໄປວ່າ "ເຮົາຊິປຽບຄົນໃນສະໄໝນີ້ຄືກັນກັບຫຍັງດີນໍ້

7:32 ຊິປຽບຄືພວກເດັກນ້ອຍພວມຫລິ້ນນຳກັນຢູ່ກາງບ້ານນີ້ເນາະ ຍ້ອນວ່າພໍພວກ
ມັນເກີດນ້ອຍໃຈກັນມັນກໍເອີ້ນໃສ່ກັນວ່າ ບັດພວກກູໄດ້ເປົ່າປີ່ເພງມ່ວນ ພວກມຶງ
ຄືບໍ່ຟ້ອນມ່ວນນຳກັນ ແລ້ວບັດພວກກູໄດ້ເປົ່າເພງໂສກເສົ້າ ພວກມຶງຄືບໍ່ຮ້ອງໄຫ້
ເປັນທຸກນຳກັນເຫີ້ຍ
7:33 ຄືວ່າບັດ ໂຢຮັນ ຜູ້ໃຫ້ຮັບຈຸ່ມນໍ້ານັ້ນມາ ລາວ ບໍ່ໄດ້ຮ່ວມກິນເຂົ້າກິນເຫລົ້າອະ-
ງຸ່ນນຳໃຜ ລາວ ອອກໄປຢູ່ແຕ່ຜູ້ດຽວ ແລ້ວພວກເຈົ້າກໍເລີຍຫາວ່າ ລາວ ຖືກຜີເຂົ້າ
7:34 ແລ້ວບັດນີ້ ເຮົາຜູ້ເປັນບຸດມະນຸດ ໄດ້ມາຮ່ວມກິນດື່ມກັບປະຊາຊົນ ແລ້ວພວກ
ເຈົ້າກໍຍັງຫາວ່າຜູ້ນີ້ເຫັນແກ່ກິນແກ່ເມົາ ເປັນໝູ່ກັບພວກຂີ້ບາບກັບພວກຄົນເກັບ-
ພາສີ
7:35 ແຕ່ວ່າຜູ້ໃດທີ່ເຄີຍຊີມເບິ່ງພຣະປັນຍາຂອງພຣະເຈົ້າກໍພິສູດວ່າຖືກຕ້ອງ
ແລ້ວ”
7:36 ແລ້ວມີນັກສາສະໜາຄະນະ ຟາຣີຊາຍ ຜູ້ໜຶ່ງ ຊື່ ຊີໂມນ ໄດ້ມາຊວນ ພຣະເຢ-
ຊູ ໄປກິນເຂົ້າເຮືອນ ລາວ
7:37 ແລ້ວ ນີ້ແຫລະ ໄດ້ມີແມ່ຍິງຫາກິນໃນເມືອງເປັນຄົນບາບຜູ້ໜຶ່ງ ພໍໄດ້ຍິນວ່າ
ພຣະເຢຊູ ມາກິນເຂົ້າຢູ່ເຮືອນ ຟາຣີຊາຍ ຜູ້ໜຶ່ງ ນາງເລີຍຖືເອົາຂວດນໍ້າຫອມລາ-
ຄາແພງໆ ເຂົ້າໄປຫາ
7:38 ແລ້ວເຂົ້າໄປຢືນຢູ່ນຳຫລັງກົງຕີນເພິ່ນ ຮ້ອງໄຫ້ຢູ່ຫັ້ນຈົນນໍ້າຕາຕົກປຽກຕີນ
ເພິ່ນ ແລ້ວນາງກໍເອົາຜົມເຊັດຕີນ ພຣະເຢຊູ ທັງຈູບຕີນ ພ້ອມເທນໍ້າມັນຫອມລູບ
ໃສ່
7:39 ບັດພໍ ຟາຣີຊາຍ ຜູ້ທີ່ເຊີນ ພຣະເຢຊູ ໄປກິນເຂົ້າເຫັນຈັ່ງຊັ່ນກໍຄຶດໃນໃຈວ່າ
“ບ໊ະ ຄັ່ນແມ່ນຄົນນີ້ເປັນຜູ້ເປັນປາກເປັນສຽງຂອງພຣະເຈົ້າອີຫລີ ກໍຄືຊິຮູ້ຈັກເນາະ
ວ່າແມ່ຍິງຂີ້ບາບທີ່ມາຈັບມາບາຍໂຕເພິ່ນນັ້ນເປັນຄົນຊົ່ວຮາວໃດ”
7:40 ພຣະເຢຊູ ເລີຍເວົ້າຂຶ້ນວ່າ “ ຊີໂມນ ເອີຍ ມີແນວໜຶ່ງທີ່ເຮົາຢາກຊິເວົ້ານຳ
ເຈົ້າ” ຊີໂມນ ບອກວ່າ “ອາຈານຊິເວົ້າແນວໃດກໍເວົ້າມາ ໂລດ ”

7:41 ພຣະເຢຊູ ເລີຍເວົ້າຂຶ້ນວ່າ “ມີນາຍທຸນຄົນໜຶ່ງ ລາວ ມີລູກໜີ້ສອງຄົນຄົນໜຶ່ງ
ເປັນໜີ້ຫ້າຮ້ອຍຫລຽນເດນາຣິອົນ ແຕ່ອີກຄົນໜຶ່ງເປັນໜີ້ພຽງຫ້າສິບຫລຽນເດ-
ນາຣິອົນ
7:42 ລູກໜີ້ສອງຄົນນີ້ບໍ່ສາມາດຊີຫາເງິນໃຊ້ໜີ້ໄດ້ ນາຍທຸນກໍຍົກໜີ້ໃຫ້ເຂົາທັງ
ສອງ ແລ້ວລູກໜີ້ສອງຄົນນີ້ ເຈົ້າວ່າຜູ້ໃດຊິຮັກແພງນາຍທຸນຫລາຍກວ່າກັນ”
7:43 ນາຍ ຊີໂມນ ເລີຍຕອບວ່າ “ຜູ້ຕິດໜີ້ຫລາຍນັ້ນ ຮັກແພງນາຍຫລາຍກວ່າ”
ພຣະເຢຊູ ເລີຍເວົ້າວ່າ “ເອີ ແມ່ນຄວາມເຈົ້ານັ້ນເນາະ”
7:44 ແລ້ວ ພຣະເຢຊູ ຫລຽວເບິ່ງນາງ ເວົ້າກັບ ຊີໂມນ ຕໍ່ວ່າ “ເຈົ້າເຫັນບໍ້ແມ່ຍິງຜູ້ນີ້
ຕັ້ງແຕ່ເຮົາໄດ້ເຂົ້າມາໃນເຮືອນຂອງເຈົ້າ ຝ່າຍເຈົ້າຍັງບໍ່ທັນເອົານ້ຳມາໃຫ້ເຮົາລ້າງ
ຕີນ ແຕ່ວ່າສ່ວນນາງນີ້ໄດ້ເອົານ້ຳຕາຂອງນາງລ້າງຕີນໃຫ້ເຮົາ ແລ້ວນາງກໍໄດ້
ເອົາຜົມຂອງນາງເຊັດນຳ
7:45 ຝ່າຍເຈົ້າກໍບໍ່ໄດ້ຈູບແກ້ມຕ້ອນຮັບເຮົາຕາມປະເພນີ ແຕ່ວ່າສ່ວນນາງນີ້ໄດ້ຈູບ
ຕີນເຮົາບໍ່ຢູ່ບໍ່ເຊົາຕັ້ງແຕ່ນາງເຂົ້າມາ
7:46 ແລ້ວຝ່າຍເຈົ້າກໍບໍ່ໄດ້ເອົານ້ຳຫອມທຳມະດາມາຢົດໃສ່ຫົວເຮົາຕາມປະເພນີ
ແຕ່ວ່າສ່ວນນາງນີ້ກໍຍັງເອົານ້ຳມັນຫອມລາຄາແພງໆ ມາລູບໃສ່ຕີນໃຫ້ເຮົາ
7:47 ຈັ່ງຊັ້ນ ເຮົາຊິບອກເຈົ້າວ່າ ສ່ວນນາງນີ້ແມ່ນວ່າບາບຂອງນາງຊິຫລາຍ ແຕ່
ນາງໄດ້ຮັບການອະໄພໝົດແລ້ວ ນາງເລີຍຮັກແພງເຮົາຫລາຍ ແຕ່ຝ່າຍຜູ້ທີ່ໄດ້-
ຮັບການອະໄພນ້ອຍ ເຂົາກໍຊິຮັກແພງເຮົານ້ອຍ”
7:48 ແລ້ວ ພຣະເຢຊູ ກໍບອກນາງວ່າ “ນາງເອີຍເຮົາໄດ້ອະໄພບາບກຳໃຫ້ເຈົ້າໝົດ
ແລ້ວ”
7:49 ບັດນີ້ຄົນທີ່ຮ່ວມໂຕະກັບ ພຣະເຢຊູ ກໍເວົ້າກັນວ່າ “ແມ່ນໃຜຜູ້ນີ້ ຄືກັນກັບຍົກ
ໂທດອະໄພບາບກຳໃຫ້ຄົນໄດ້”
7:50 ແລ້ວ ພຣະເຢຊູ ໄດ້ເວົ້າກັບນາງອີກວ່າ “ນາງໄດ້ຮັບການອະໄພໂທດຍ້ອນວ່າ
ເຈົ້າວາງໃຈໃນເຮົາ ກັບເມືອສາ ໄປດ້ວຍຄວາມສະຫງົບສຸກໃນໃຈເດີ້”

# ລູກາ ບົດທີ 8

8:1 ບັດນີ້ ຫລັງຈາກນັ້ນມາ ພຣະເຢຊູ ໄດ້ອອກໄປຕາມຄູ່ບ້ານຄູ່ເມືອງ ໄປບອກ
ສອນຂ່າວດີເລື່ອງລາຊະອານາຈັກຂອງພຣະເຈົ້າໃຫ້ຄົນຟັງ ແລ້ວລູກສິດສິບສອງ
ຄົນນັ້ນກໍໄປນໍາ
8:2 ແລ້ວມີຍິງຜູ້ລາງຄົນທີ່ ພຣະເຢຊູ ເຄີຍປົວໄດ້ໄປນໍາ ມີ ມາຣີອາ ໄທມັກດາລາ
ທີ່ເຄີຍຖືກຜີເຂົ້າເຈັດໂຕ
8:3 ແລ້ວກໍມີທ່ານນາຍ ໂຢອັນນາ ເມຍຂອງ ຄູຊາ ເຈົ້າໜ້າທີ່ໃນວັງ ເຮໂຣດ ກັບ
ນາງ ຊູຊັນນາ ແລ້ວກໍມີອີກຫລາຍຄົນໄດ້ໄປນໍາ ຊຶ່ງພວກເຂົາໄດ້ສະໜັບສະໜູນ
ພຣະເຢຊູ ໂດຍຊັບຂອງຕົນ
8:4 ແລ້ວບັດພໍມີຄົນຫລວງຫລາຍຈາກຄູ່ບ້ານຄູ່ເມືອງໄດ້ມາຮ່ວມກັນແລ້ວ ເພິ່ນໄດ້
ເລີ່ມເວົ້າຄໍາປຽບທຽບໃຫ້ເຂົາຟັງວ່າ
8:5 "ມີຄົນໜຶ່ງອອກໄປຫວ່ານເມັດພືດ ພວມຫວ່ານຢູ່ນັ້ນ ລາງເມັດກໍໄດ້ຕົກໃສ່
ທາງທຽວຖືກຄົນຢຽບໄປຢຽບມາ ແລ້ວພວກນົກກໍບິນລົງມາຈິກກິນໝົດ
8:6 ລາງເມັດກໍໄດ້ຕົກໃສ່ດິນປົກພື້ນດິນຫີນ ແລ້ວພໍປົ່ງຂຶ້ນມາຢູ່ບໍ່ໂດນມັນກໍຫ່ຽວ
ຕາຍ ຍ້ອນວ່າດິນຂາດນໍ້າລ້ຽງ
8:7 ລາງເມັດກໍໄດ້ຕົກກາງຂຸມກໍໜາມ ແລ້ວໜາມໄດ້ປົ່ງຂຶ້ນພ້ອມກັນ ກໍເລີຍຫງໍາ
ມັນໄວ້
8:8 ແຕ່ວ່າ ລາງເມັດກໍໄດ້ຕົກໃສ່ດິນດີ ໄດ້ປົ່ງຂຶ້ນມາແລ້ວອອກໝາກອອກຜົນໄດ້
ໜຶ່ງຮ້ອຍເທົ່າໂຕ" ພໍເວົ້າເລື່ອງປຽບທຽບນັ້ນແລ້ວ ພຣະເຢຊູ ໄດ້ຮ້ອງຂຶ້ນສຽງດັ່ງ
ວ່າ "ໃຜມີຫູກໍໃຫ້ຟັງເອົາເດີ້"
8:9 ແລ້ວພວກລູກສິດຂອງເພິ່ນຖາມວ່າ "ເລື່ອງປຽບທຽບນີ້ໝາຍຄວາມວ່າຈັ່ງໃດ"
8:10 ພຣະເຢຊູ ເລີຍບອກລູກສິດວ່າ "ພຣະເຈົ້າກໍຊິໂຜດໃຫ້ພວກເຈົ້າຮູ້ຈັກຂໍ້ເລິກ-
ລັບເລື່ອງລາຊະອານາຈັກຂອງເພິ່ນຢູ່ດອກ ແຕ່ຝ່າຍຜູ້ອື່ນນັ້ນ ກໍຊິໃຫ້ເປັນເລື່ອງ
ປຽບທຽບຊື່ໆ ເພື່ອວ່າ ເຂົາຊິເບິ່ງແຕ່ຊິບໍ່ເຫັນ ຊິຟັງແຕ່ຊິບໍ່ເຂົ້າໃຈ
8:11 ເລື່ອງປຽບທຽບນີ້ໝາຍຄວາມວ່າຈັ່ງຊີ້ ເມັດພືດນັ້ນກໍປຽບຄື ພຣະຄໍາ ຂອງ
ພຣະເຈົ້າ

8:12 ແລ້ວເມັດທີ່ຕົກໃສ່ທາງຫຍ້ານັ້ນ ກໍປຽບຄືຄົນທີ່ພໍໄດ້ຍິນແລ້ວ ພະຍາມານ
ຊາຕານ ກໍມາເອົາ ພຣະຄຳ ຂອງພຣະເຈົ້າອອກຈາກໃຈຂອງເຂົາ ຢ້ານວ່າ ພວກ-
ເຂົາ ອາດ ຊິເຊື່ອແລ້ວຮັບຄວາມລອດພົ້ນໄດ້
8:13 ແລ້ວເມັດທີ່ຕົກໃສ່ດິນປົກພື້ນດິນຫີນນັ້ນ ກໍປຽບຄື ບັດພໍໄດ້ຍິນ ພຣະຄຳ ຂອງ
ພຣະເຈົ້າເຂົາກໍຮັບເອົາດ້ວຍຄວາມຍິນດີ ແຕ່ພວກນີ້ບໍ່ມີຮາກຫຍັງ ເຊື່ອພໍຊົ່ວຄາວ
ແຕ່ບັດເກີດມີແນວມາທົດລອງໃຈເຂົາກໍຫລົງຫາຍໄປ
8:14 ແລ້ວເມັດທີ່ຕົກຢູ່ກາງໜາມນັ້ນກໍປຽບຄືຄົນທີ່ໄດ້ຍິນ ພຣະຄຳ ຂອງພຣະເຈົ້າ
ແລ້ວກໍອອກໄປຕາມເລື່ອງຂອງເຂົາ ແຕ່ພໍຄວາມກັງວົນ ຄວາມຮັ່ງມີ ແລ້ວຄວາມ
ສຸກທາງຊີວິດໃນໂລກນີ້ເຂົ້າມາ ມັນກໍຫງໍາ ພຣະຄຳ ຂອງພຣະເຈົ້າໄວ້ ເລີຍບໍ່ໃຫ້
ຈະເລີນເຕີບໂຕຂຶ້ນ
8:15 ‘ແຕ່ເມັດທີ່ຕົກໃສ່ດິນດີນັ້ນ ກໍປຽບຄືຄົນທີ່ໄດ້ຍິນ ພຣະຄຳ ຂອງພຣະເຈົ້າແລ້ວ
ກໍຮັບເອົາດ້ວຍຄວາມຈິງໃຈ ຮັກສາໄວ້ດ້ວຍໃຈຢືນຍົງຈົນເກີດຜົນໃນຊີວິດ’
8:16 ແລ້ວເພິ່ນເວົ້າວ່າ ‘ບໍ່ເຄີຍມີໃຜ ບັດໄຕ້ຕະກຽງແລ້ວກໍເອົາຄຸຖັງມາປົກປິດໄວ້
ຫລືວ່າເອົາໄປໄວ້ໃຕ້ຕຽງດອກ ມີແຕ່ຊິເອົາໄປຕັ້ງໄວ້ເທິງບ່ອນຕັ້ງນັ້ນເນາະ ເພື່ອ
ຄົນທີ່ເຂົ້າມາຊິເຫັນຮຸ່ງໄດ້
8:17 ຄືວ່າ ບໍ່ມີອິຫຍັງເລິກລັບທີ່ຊິບໍ່ຖືກເປີດເຜີຍອອກມາ ຫລືວ່າບໍ່ມີແນວທີ່ຖືກ
ປົດບັງເຊື່ອງໄວ້ທີ່ຊິບໍ່ໄດ້ອອກມາໃນທີ່ແຈ້ງ
8:18 ຈັ່ງຊັ້ນ ຄອຍຖ້າເບິ່ງເດີ້ ແນວທີ່ເຈົ້າໄດ້ຍິນໄດ້ຟັງ ຍ້ອນວ່າຜູ້ທີ່ມີແລ້ວ ເຂົາກໍຊິ
ໄດ້ຮັບເພີ່ມຕື່ມອີກ ແຕ່ຜູ້ທີ່ບໍ່ມີ ແມ່ນແຕ່ແນວທີ່ເຂົາຄຶດວ່າມີ ມັນກໍຊິເອົາຈາກເຂົາ
ໄປໝົດ’
8:19 ຫວ່າງນັ້ນ ແມ່ກັບພວກນ້ອງຊາຍຂອງເພິ່ນມາຫາ ແຕ່ເຂົາເຂົ້າໄປຫາບໍ່ໄດ້
ຍ້ອນຄົນຫລາຍ
8:20 ແລ້ວບັດມີຄົນມາບອກເພິ່ນວ່າ ‘ທ່ານແມ່ກັບພວກນ້ອງຊາຍຂອງທ່ານພວມ
ຢືນຖ້າຢູ່ທາງນອກ ຢາກພໍ້ທ່ານ’
8:21 ພຣະເຢຊູ ເລີຍເວົ້າວ່າ ‘ທ່ານແມ່ກັບພີ່ນ້ອງຂອງເຮົາແມ່ນໃຜ ກໍແມ່ນຄົນທີ່ຟັງ
ພຣະຄຳ ຂອງພຣະເຈົ້າແລ້ວໃຊ້ຊີວິດຕິດຕາມນັ້ນເນາະ’

8:22 ບັດນີ້ ມີຢູ່ມື້ໜຶ່ງທີ່ ພຣະເຢຊູ ໄດ້ພາລູກສິດໄປລົງເຮືອ ແລ້ວຊວນພວກເຂົາວ່າ
'ໃຫ້ເຮົາຂ້າມທະເລ ກາລີເລ ໄປຟາກທາງພູ້ນເຖີ'
8:23 ແຕ່ວ່າພວມໄປຢູ່ນັ້ນ ພຣະເຢຊູ ກໍຫລັບໄປ ແລ້ວໄດ້ເກີດລົມພະຍຸພັດມາຢ່າງ
ແຮງ ຄື້ນນໍ້າກໍຊັດເຂົ້າເຮືອຈົນຮອດຂັ້ນອັນຕະລາຍ
8:24 ພວກລູກສິດເລີຍປຸກ ພຣະເຢຊູ ບອກວ່າ 'ນາຍເອີຍໆ ຊ່ອຍແດ່ທ້ອນ ຊິຈົມຊິ
ຕາຍກັນແລ້ວ' ແລ້ວ ພຣະເຢຊູ ໄດ້ລຸກຂຶ້ນຫ້າມລົມກັບຄື້ນ ມັນເລີຍເຊົາມິດງຽບ
ກັບໜ້ອງ"
8:25 ແລ້ວ ພຣະເຢຊູ ຖາມເຂົາວ່າ "ຄວາມເຊື່ອຂອງພວກເຈົ້າໄປໃສໝົດ" ບັດນີ້
ພວກລູກສິດນັ້ນກໍເລີຍຄຶດຢ້ານ ແປກໃຈງຶດຫລາຍ ຖາມກັນວ່າ " ພຣະເຢຊູ ນີ້
ເປັນຄົນແບບໃດນໍ້ ຂະໜາດລົມກັບນໍ້າກໍຍັງເຊື່ອຟັງເພິ່ນ"
8:26 ພໍຂ້າມໄປຮອດເຂດເມືອງ ເຄຣາຊາ ຊຶ່ງຢູ່ກົງກັນຂ້າມເມືອງ ກາລີເລ
8:27 ແລ້ວບັດພໍ ພຣະເຢຊູ ຂຶ້ນຈາກເຮືອ ໄດ້ມີຜູ້ຊາຍໄທເມືອງນັ້ນອອກມາຫາເພິ່ນ
ຜູ້ນີ້ມີຜີຫລາຍໂຕເຂົ້າສິງ ຈັ່ງບໍ່ໄດ້ໃສ່ເສື້ອໃສ່ເສື້ອແຕ່ດົນນານ ເຂົາບໍ່ມີເຮືອນມີ
ຊານແຕ່ໄປອາໄສຢູ່ໃນປ່າຊ້າ
8:28 ພໍເຫັນ ພຣະເຢຊູ ແລ້ວ ຜູ້ຊາຍນັ້ນເລີຍໝູບລົງຕໍ່ໜ້າເພິ່ນ ແລ້ວຮ້ອງສຽງດັ່ງ
ວ່າ "ໂອ໋ ພຣະເຢຊູ ບຸດຂອງພຣະເຈົ້າຜູ້ສູງສຸດເອີຍ ຂໍຢ່າທໍລະມານຜູ້ຂ້າທ້ອນ"
8:29 ມັນເວົ້າຈັ່ງຊັ້ນ ຍ້ອນ ພຣະເຢຊູ ໄດ້ສັ່ງໃຫ້ຜີອອກມາຈາກຜູ້ຊາຍຜູ້ນັ້ນແລ້ວ ຄື
ມັນເຄີຍອອກລິດເຮັດໃສ່ເຂົາຢູ່ຢ່າງຕໍ່ເນື່ອງ ຂະໜາດຄົນຊິລ່າມໂສ້ໄວ້ກໍຍັງດຶງ
ຂາດ ໂລດ ແລ້ວເຂົາຖືກຜີຂັບໄສອອກໄປຢູ່ໃນປ່າຊ້າ
8:30 ພຣະເຢຊູ ເລີຍຖາມມັນວ່າ "ມຶງຊື່ວ່າຈັ່ງໃດ" ມັນບອກວ່າ "ຊື່ກອງ" ຍ້ອນວ່າມີ
ຫລາຍໂຕເຂົ້າໄປສິງຢູ່ໃນຜູ້ຊາຍຜູ້ນັ້ນ
8:31 ແລ້ວພວກຜີນັ້ນກໍອ້ອນວອນຂໍບໍ່ໃຫ້ ພຣະເຢຊູ ສົ່ງມັນລົງຂຸມນະລົກກ່ອນຊິ
ຮອດຍາມ
8:32 ຫວ່າງນັ້ນ ມີໝູຝູງໃຫຍ່ພວມຫາກິນເທິງພູຢູ່ໜ້ອງນັ້ນ ຜີກໍເລີຍຂໍອະນຸຍາດນຳ
ພຣະເຢຊູ ໃຫ້ເຂົ້າສິງໃນໝູ ແລ້ວເພິ່ນອະນຸຍາດ

8:33 ພວກຜີກອງນັ້ນເລີຍອອກຈາກຜູ້ຊາຍຜູ້ນັ້ນເຂົ້າສິງໃນຝູງໝູ ເຂົ້າແລ້ວໝູກໍຕື່ນ
ແລ່ນລົງເນີນຜາ ໂຕນນໍ້າຕາຍໝົດ
8:34 ພໍພວກລ້ຽງໝູເຫັນຈັ່ງຊັ້ນກໍພາກັນແລ່ນໄປບອກໃຫບ້ານໃຫເມືອງກັບອ້ອມ-
ແອ້ມແຖວນັ້ນ
8:35 ແລ້ວຕ່າງຄົນກໍຕ່າງອອກໄປເບິ່ງ ພໍໄປຮອດກໍເຫັນຜູ້ຊາຍຜູ້ທີ່ເຄີຍຖືກຜີຮ້າຍ
ນັ້ນນັ່ງຢູ່ໃກ້ ພຣະເຢຊູ ຢ່າງສະບາຍອົກສະບາຍໃຈ ໃສ່ເສື້ອໃສ່ເສື້ອມີສະຕິດີ
ແລ້ວພວກຄົນນັ້ນກໍເກີດຢ້ານ
8:36 ແລ້ວຜູ້ຄົນຢູ່ຫັ້ນທີ່ໄດ້ເຫັນກໍເປັນພະຍານຕໍ່ພວກຄົນທີ່ມາເບິ່ງເຖິງສາເຫຕຸ ວ່າ
ຄົນທີ່ຖືກຜີຮ້າຍເຊົາເປັນດີແລ້ວໄດ້ຈັ່ງໃດ
8:37 ແລ້ວໝົດຄູ່ຄົນທົ່ວເຂດ ເຄຣາຊາ ກັບຄົນອ້ອມແອ້ມແຖວນັ້ນພາກັນຂໍຮ້ອງ
ພຣະເຢຊູ ໃຫ້ອອກຈາກເຂົາໄປ ຍ້ອນວ່າເຂົາເກີດຢ້ານຢ່າງໃຫຍ່ ພຣະເຢຊູ ເລີຍ
ພາລູກສິດລົງເຮືອເພື່ອຊິຫລົບເມືອ
8:38 ບັດນີ້ ຜູ້ຊາຍຜູ້ທີ່ ພຣະເຢຊູ ໄດ້ຂັບໄລ່ຜີອອກນັ້ນກໍຂໍໄປນໍາເພິ່ນ ແຕ່ ພຣະເຢ-
ຊູ ບອກເຂົາວ່າ
8:39 "ຄືນເມືອບ້ານເມືອງຂອງເຈົ້າສາ ໄປບອກເລື່ອງນີ້ທີ່ພຣະເຈົ້າໄດ້ຊ່ອຍເຈົ້າໃຫ້
ເຂົາຟັງເດີ້" ແລ້ວຜູ້ຊາຍຜູ້ນັ້ນກໍເລີຍເມືອໄປບອກຄົນທົ່ວເມືອງເຖິງແນວສໍາຄັນ
ອັນໃຫຍ່ຍິ່ງທີ່ ພຣະເຢຊູ ໄດ້ເຮັດໃຫ້ເຂົາ
8:40 ແລ້ວມັນເປັນທີ່ວ່າ ພໍ ພຣະເຢຊູ ຫລົບຄືນມາຮອດຝັ່ງ ກາລີເລ ແລ້ວ ໄດ້ມີຄົນ
ຫລວງຫລາຍອອກມາຄອຍຖ້າຕ້ອນຮັບເພິ່ນຢູ່ນັ້ນ
8:41 ແລ້ວນີ້ແຫລະ ໄດ້ມີຜູ້ໜຶ່ງຊື່ນາຍ ຢາອີໂຣ ເປັນຫົວໜ້າເບິ່ງແຍງການງານໃນ
ໂຮງທໍາ ໄດ້ມາຂາບຕີນ ພຣະເຢຊູ ກັບວອນຂໍໃຫ້ເພິ່ນໄປເຮືອນຂອງເຂົາ
8:42 ຍ້ອນວ່າ ລາວ ມີລູກສາວຜູ້ດຽວອາຍຸສິບສອງປີປ່ວຍໃກ້ຊິຕາຍແລ້ວ ຕອນ
ພຣະເຢຊູ ພວມໄປກັບລາວກໍມີຄົນຫລວງຫລາຍແຫ່ກັນບຽດໄປນໍາເພິ່ນ
8:43 ບັດນີ້ ມີແມ່ຍິງຜູ້ໜຶ່ງໃນພວກນັ້ນ ເປັນຕົກເລືອດມາສິບສອງປີແລ້ວ ຍິງຜູ້ນີ້
ໄດ້ໃຊ້ເງິນໄປຫາໝໍຫລາຍຄົນ ແຕ່ບໍ່ມີໃຜປົວໃຫ້ເຊົາເປັນດີໄດ້

8:44 ນາງເລີຍແອບຂຶ້ນໄປທາງຫລັງ ພຣະເຢຊູ ແລ້ວຢື້ມືອອກແຕະຂອບເສື້ອຂອງ
ເພິ່ນ ແຕະແລ້ວນາງກໍໄດ້ເຊົາຕົກເລືອດເປັນດີກັບໜ້ອງ
8:45 ແລ້ວ ພຣະເຢຊູ ເລີຍເວົ້າຂຶ້ນວ່າ "ແມ່ນໃຜມາຊູນມາຕ້ອງເຮົາ" ແຕ່ບໍ່ມີໃຜ
ຍອມຮັບ ເປໂຕ ເລີຍເວົ້າກັບ ພຣະເຢຊູ ວ່າ "ອາຈານເອີຍ ມີຄົນຫລວງຫລາຍ
ບຽດອາຈານຊື່ໆ ແລ້ວອາຈານຢາກຮູ້ວ່າໃຜແຕະຕ້ອງ"
8:46 ແຕ່ ພຣະເຢຊູ ເວົ້າວ່າ "ບໍ່ແມ່ນ ຕ້ອງມີຜູ້ໜຶ່ງມາຕ້ອງເຮົາອີຫລີ ຍ້ອນເຮົາຮູ້ສຶກ
ໂຕວ່າລິດໄດ້ຊ່ານອອກຈາກເຮົາໄປປົວເຂົາ"
8:47 ພໍຍິງນັ້ນຮູ້ວ່າຊິຖືກເປີດເຜີຍ ເຂົາກໍອອກມາຢ່າງໂຕສັ່ນຂາບລົງຕໍ່ໜ້າ ພຣະ-
ເຢຊູ ຍອມຮັບກັບເພິ່ນຢູ່ຕໍ່ໜ້າຄົນທັງຫລາຍວ່າ ໄດ້ແຕະເພິ່ນຍ້ອນອີຫຍັງ ກັບໄດ້
ບອກວ່າພະຍາດປະຈຳໂຕນັ້ນໄດ້ເຊົາເປັນດີໝົດແລ້ວ
8:48 ພຣະເຢຊູ ເລີຍເວົ້າກັບຍິງວ່າ "ລູກສາວເອີຍເຈົ້າເຊົາດີແລ້ວ ຍ້ອນວ່າເຈົ້າ
ວາງໃຈໃນເຮົາ ເນືອສາ ໃຫ້ໄປດ້ວຍຄວາມສະຫງົບສຸກເດີ້"
8:49 ຕອນ ພຣະເຢຊູ ຍັງເວົ້ານຳນາງຢູ່ ໄດ້ມີຄົນໜຶ່ງມາແຕ່ເຮືອນຂອງນາຍ ຢາອີ-
ໂຣ ຫົວໜ້າເບິ່ງແຍງການງານໃນໂຮງທຳວ່າ "ລູກສາວເຈົ້າຕາຍແລ້ວ ບໍ່ຕ້ອງ
ລົບກວນ ພຣະເຢຊູ ອີກດອກ"
8:50 ແຕ່ພໍ ພຣະເຢຊູ ໄດ້ຍິນແນວນັ້ນ ກໍເລີຍບອກນາຍ ຢາອີໂຣ ວ່າ "ຢ່າສູ່ຕົກໃຈ
ຢ້ານ ໃຫ້ພັກພິງວາງໃຈຢ່າງດຽວເດີ້ ແລ້ວລູກສາວເຈົ້າຊິເຊົາເປັນດີຢູ່ດອກ"
8:51 ພໍ ພຣະເຢຊູ ໄປຮອດເຮືອນຂອງນາຍ ຢາອີໂຣ ແລ້ວ ເພິ່ນກໍບໍ່ໃຫ້ໃຜເຂົ້າໄປ
ມີແຕ່ ເປໂຕ ໂຢຮັນ ກັບ ຢາໂກໂບ ພ້ອມພໍ່ແມ່ຂອງນາງ
8:52 ບັດນີ້ ມີພວກຄົນພວມຮ້ອງໄຫ້ເສຍໃຈນຳນາງ ແຕ່ ພຣະເຢຊູ ບອກເຂົາວ່າ "ບໍ່
ຕ້ອງຮ້ອງໄຫ້ເດີ້ ນາງບໍ່ໄດ້ຕາຍ ມີແຕ່ນອນຫລັບຊື່ໆ"
8:53 ບັດນີ້ເຂົາກໍພາກັນຫົວເຍາະເຍີ້ຍ ພຣະເຢຊູ ຍ້ອນເຂົາຮູ້ວ່ານາງໄດ້ຕາຍອີຫລີ
8:54 ແຕ່ ພຣະເຢຊູ ໄດ້ຈັບມືນາງແລ້ວບອກນາງວ່າ "ນາງນ້ອຍເອີຍ ໃຫ້ລຸກຂຶ້ນມາ
ສາ"
8:55 ບັດນີ້ ວິນຍານຂອງນາງໄດ້ກັບມາ ແລ້ວນາງລຸກຂຶ້ນກັບໜ້ອງ ແລ້ວ ພຣະເຢ-
ຊູ ໄດ້ສັ່ງໃຫ້ເອົາແນວກິນມາໃຫ້ນາງກິນ

8:56 ບັດນີ້ ພໍ່ແມ່ຂອງນາງກໍພາກັນສັງເກດໃຈເປັນຕາງຶດຢ່າງໃຫຍ່ ແຕ່ ພຣະເຢຊູ
ສັ່ງຫ້າມເຂົາໄວ້ ບໍ່ໃຫ້ເວົ້າເລື່ອງນີ້ໃຫ້ໃຜຟັງ

## ລູກາ ບົດທີ 9

9:1 ຢູ່ມາ ພຣະເຢຊູ ໄດ້ເອີ້ນພວກລູກສິດສິບສອງຄົນນັ້ນມາຮ່ວມກັນ ແລ້ວມອບ
ໃຫ້ເຂົາມີສິດອຳນາດເໜືອຜີ ພ້ອມທັງປົວໂລກໄດ້
9:2 ແລ້ວເພິ່ນກໍໄດ້ສົ່ງພວກເຂົາອອກໄປປ່າວປະກາດເລື່ອງລາຊະອານາຈັກຂອງ-
ພຣະເຈົ້າໃຫ້ຄົນຮູ້ຈັກ ກັບປົວໂລກຄົນນຳ
9:3 ແລ້ວເພິ່ນບອກເຂົາວ່າ “ບໍ່ໃຫ້ເອົາອິຫຍັງໄປນຳເດີ້ ບໍ່ວ່າຊິເປັນໄມ້ຄ້ອນເທົ້າ
ຫລືຍ່າມ ຫລືແນວກິນ ຫລືເງິນ ຫລືເສື້ອຜ້າໜ້າແພ
9:4 ໄປແວະເຮືອນໃດຄັ່ນເຂົາຕ້ອນຮັບກໍໃຫ້ພັກຢູ່ນັ້ນເດີ້ ຈົນກວ່າຊິລາຈາກໄປ
9:5 ບ້ານໃດເມືອງໃດທີ່ບໍ່ຕ້ອນຮັບ ກໍໃຫ້ອອກມາ ໂລດ ແລ້ວສະບັດຂີ້ຝຸ່ນອອກ-
ຈາກຕີນເປັນພະຍານຟ້ອງເຕືອນເຂົາວ່າເຈົ້າບໍ່ກ່ຽວເລີຍ”
9:6 ແລ້ວພວກລູກສິດນັ້ນກໍໄດ້ພາກັນອອກໄປທົ່ວຄູ່ບ້ານຄູ່ເມືອງ ເວົ້າຂ່າວດີ-
ເລື່ອງລາຊະອານາຈັກນັ້ນໃຫ້ຄົນຮູ້ຈັກ ກັບໄດ້ປົວໂລກໃຫ້ເຂົານຳໃນຄູ່ໜ້ອງ
9:7 ບັດນີ້ ເລື່ອງຕ່າງໆ ທີ່ ພຣະເຢຊູ ໄດ້ເຮັດນັ້ນກໍໄດ້ຍິນໄປຮອດຫູເຈົ້າເມືອງ ເຮ-
ໂຣດ ລາວ ເລີຍງຶດຫລາຍ ຍ້ອນຜູ້ລາງຄົນຫາວ່າຜູ້ທີ່ພວມເຮັດນັ້ນເປັນ ໂຢຮັນ
*ຜູ້ໃຫ້ຈຸ່ມນໍ້ານັ້ນ* ໄດ້ເປັນຄືນມາແຕ່ຕາຍແລ້ວ
9:8 ແລ້ວຜູ້ລາງຄົນກໍຍັງຫາວ່າເປັນ ເອລີຢາ ຫລືຜູ້ເປັນປາກເປັນສຽງຂອງພຣະ-
ເຈົ້າຜູ້ອື່ນໆ ຈາກສະໄໝແຕ່ກີ້ໄດ້ເປັນຄືນມາແຕ່ຕາຍ
9:9 ເຮໂຣດ ເລີຍເວົ້າວ່າ “ ໂຢຮັນ ນັ້ນ ເຮົາເອງໄດ້ສັ່ງຕັດຄໍເຂົາແລ້ວ ແຕ່ຜູ້ນີ້ແມ່ນ
ໃຜທີ່ເຮົາໄດ້ຍິນເຖິງນັ້ນ” ແລ້ວແຕ່ນັ້ນມາ ເຮໂຣດ ພະຍາຍາມທີ່ຊິພົ້ກັບ ພຣະເຢ-
ຊູ
9:10 ບັດນີ້ ພໍພວກລູກສິດໄດ້ຫລົບມາຫາ ພຣະເຢຊູ ແລ້ວ ໄດ້ເວົ້າແນວທີ່ໄດ້ເຮັດ
ມາໃຫ້ເພິ່ນຟັງ ແລ້ວ ພຣະເຢຊູ ພາພວກເຂົາອອກເດີນທາງໄປບໍລິເວນເປົ່າປ່ຽວ
ທີ່ບໍ່ມີຄົນຢູ່ ຂອງເຂດເທດສະບານເມືອງ ເບດໄຊດາ

9:11 ແຕ່ພໍພວກປະຊາຊົນຮູ້ຈັ່ງຊັ້ນ ກໍເລີຍພາກັນຕິດຕາມໄປຫາເພິ່ນຢູ່ນັ້ນ ແລ້ວ
ພຣະເຢຊູ ກໍໄດ້ຕ້ອນຮັບເຂົາ ແລ້ວກໍເວົ້າເລື່ອງລາຊະອານາຈັກຂອງພຣະເຈົ້າໃຫ້
ເຂົາຟັງ ແລ້ວຜູ້ໃດເປັນພະຍາດຫຍັງ ເພິ່ນກໍປົວໃຫ້ເຊົາເປັນດີ
9:12 ພໍໃກ້ຊິຄ່ຳແລ້ວ ລູກສິດສິບສອງຄົນນັ້ນກໍໄດ້ມາເວົ້າກັບ ພຣະເຢຊູ ວ່າ “ໝ້ອງ
ນີ້ມັນປ່ຽວ ໃຫ້ພວກປະຊາຊົນອອກໄປຊື້ແນວຢູ່ແນວກິນ ຫາໝ້ອງຫລັບໝ້ອງ
ນອນນຳບ້ານແຖວນີ້ເປັນຫຍັງ”
9:13 ແຕ່ ພຣະເຢຊູ ບອກພວກເຂົາວ່າ “ໃຫ້ພວກເຈົ້າເອົາແນວກິນໃຫ້ເຂົາເດີ້” ລູກ-
ສິດຕອບວ່າ “ແນວກິນຢູ່ນີ້ມີແຕ່ເຂົ້າຈີ່ຫ້າກ້ອນກັບປາສອງໂຕເທົ່ານັ້ນ ຄົນຫລາຍ
ຄືນີ້ມັນບໍ່ພໍດອກຄັ້ນບໍ່ໄດ້ອອກໄປຊື້ມາຕື່ມອີກ”
9:14 ຂະໜາດນັບແຕ່ຜູ້ຊາຍກໍຍັງໄດ້ປະມານຫ້າພັນຄົນ ແລ້ວ ພຣະເຢຊູ ບອກລູກ-
ສິດວ່າ “ບອກໃຫ້ເຂົານັ່ງລົງເປັນກຸ່ມໆ ກຸ່ມລະຫ້າສິບຄົນເດີ້”
9:15 ແລ້ວພວກລູກສິດກໍເລີຍບອກໃຫ້ພວກຄົນຢູ່ຫັ້ນນັ່ງລົງ
9:16 ແລ້ວ ພຣະເຢຊູ ກໍຈັບເຂົ້າຈີ່ຫ້າກ້ອນກັບປາສອງໂຕນັ້ນຂຶ້ນມາ ແລ້ວຫລຽວ
ໜ້າຂຶ້ນທາງສະຫວັນ ຂອບໃຈພຣະເຈົ້າຊະກ່ອນ ແລ້ວກໍບິຍື່ນໃຫ້ລູກສິດໄປແຈກ
ໃຫ້ພວກຄົນຢູ່ຫັ້ນກິນ
9:17 ແລ້ວໝົດຄູ່ຄົນກໍໄດ້ກິນຈົນອີ່ມໜໍາ ແລ້ວທ່ອນສ່ວນທີ່ເຫລືອເຂົາກໍເກັບໄດ້ສິບ
ສອງກະບຸງ
9:18 ແລ້ວຢູ່ຕໍ່ມາ ຕອນ ພຣະເຢຊູ ພວມອະທິຖານເວົ້ານຳພຣະເຈົ້າຢູ່ຜູ້ດຽວ ພວກ
ລູກສິດກໍມາຢູ່ນຳ ພຣະເຢຊູ ເລີຍຖາມເຂົາເບິ່ງວ່າ “ພວກປະຊາຊົນນັ້ນ ເຂົາເຂົ້າ-
ໃຈວ່າເຮົາເປັນໃຜ”
9:19 ເຂົາເລີຍຕອບວ່າ “ຜູ້ລາງຄົນວ່າ ເຈົ້າເປັນ ໂຢຮັນ ຜູ້ໃຫ້ຈຸ່ມນ້ຳນັ້ນ ຜູ້ລາງຄົນກໍ
ວ່າ ເອລີຢາ ແລ້ວອີກຜູ້ລາງຄົນກໍວ່າເປັນຜູ້ເປັນປາກເປັນສຽງຂອງພຣະເຈົ້າຜູ້
ອື່ນໆ ຈາກສະໄໝແຕ່ກີ້ໄດ້ເປັນຄືນມາແຕ່ຕາຍ”
9:20 ແລ້ວ ພຣະເຢຊູ ເລີຍຖາມລູກສິດວ່າ “ພວກເຈົ້າເດ ເຂົ້າໃຈວ່າເຮົາເປັນໃຜ
ຊັ້ນ” ເປໂຕ ຕອບວ່າ “ເຈົ້າເປັນ ພຣະຄຣິດ ເປັນພຣະຜູ້ໂຜດທີ່ມາຈາກພຣະເຈົ້າ”
9:21 ພຣະເຢຊູ ເລີຍສັ່ງຫ້າມລູກສິດໄວ້ ຢ່າຫາກໍບອກແນວນີ້ໃຫ້ຜູ້ໃດ

9:22 ແລ້ວບອກອີກວ່າ "ເຮົາຜູ້ເປັນບຸດມະນຸດຊິຕ້ອງຖືກທໍລະມານຫລາຍອັນ
ຫລາຍແນວ ກັບພວກຜູ້ຫລັກຜູ້ໃຫຍ່ ພວກຫົວໜ້າປະໂລຫິດ ພ້ອມທັງພວກນັກ-
ທຳຊິບໍ່ຍອມຮັບໃນໂຕເຮົາ ແລ້ວເຂົາກໍຊິຈັດການຂ້າເຮົາຖິ້ມ ແຕ່ໃນມື້ທີ່ສາມເຮົາ
ຊິເປັນຄືນມາອີກ"
9:23 ພຣະເຢຊູ ເວົ້າຕໍ່ໄປວ່າ "ຄັ່ນຜູ້ໃດຢາກເປັນລູກສິດຂອງເຮົາອີຫລີກໍໃຫ້ປະຕິ-
ເສດໂຕເອງເດີ້ ແລ້ວແບກເອົາໄມ້ກາງແຂນຂອງໂຕ ຈັ່ງຕາມເຮົາມາ
9:24 ໂດຍວ່າຜູ້ໃດຢາກເອົາໂຕລອດເປັນຍອດດີນັ້ນ ໃນທີ່ສຸດກໍຊິເສຍຊີວິດໄປ ແຕ່
ຜູ້ທີ່ເສຍສະລະຊີວິດຂອງໂຕຍ້ອນເຫັນແກ່ເຮົາ ຜູ້ນັ້ນເນາະຊິໄດ້ຊີວິດລອດອີຫລີ
9:25 ຄັ່ນແມ່ນວ່າຜູ້ໃດໄດ້ຂອງທັງໝົດທາງໂລກນີ້ ແຕ່ໃນທີ່ສຸດຊີວິດຂອງເຂົາຕ້ອງ
ຫລົງຫາຍພິນາດໄປ ມັນຊິໄດ້ປະໂຫຍດອີຫຍັງ
9:26 ຜູ້ໃດມີຄວາມລະອາຍຍ້ອນເຮົາ ກັບຖ້ອຍຄຳຂອງເຮົາ ເຮົາຜູ້ເປັນບຸດມະນຸດກໍ
ຊິມີຄວາມລະອາຍໃນໂຕຜູ້ນັ້ນຄືກັນ ບັດເຮົາລົງມາໃນສະຫງ່າລາສີຂອງເຮົາ ກັບ
ສະຫງ່າລາສີຂອງພຣະເຈົ້າ ກັບຂອງເທວະທູດອັນບໍລິສຸດນັ້ນນຳ
9:27 ເຮົາຊິເວົ້າຕາມຊື່ນີ້ແຫລະ ຄືມີຜູ້ລາງຄົນທີ່ພວມຢືນຢູ່ນີ້ ຊິບໍ່ຊິມຄວາມຕາຍຈົນ
ກວ່າເຂົາຊິເຫັນລາຊະອານາຈັກຂອງພຣະເຈົ້າ"
9:28 ແລ້ວມັນເປັນໄປທີ່ວ່າ ຢູ່ມາປະມານແປດມື້ຫລັງຈາກ ພຣະເຢຊູ ເວົ້າຖ້ອຍຄຳ
ນີ້ ເພິ່ນໄດ້ພາ ເປໂຕ  ໂຢຮັນ  ກັບ ຢາໂກໂບ  ຂຶ້ນໄປເທິງພູເຂົາເພື່ອອະທິຖານ
ເວົ້ານຳພຣະເຈົ້າ
9:29 ຕອນພວມອະທິຖານເວົ້ານຳພຣະເຈົ້າຢູ່ນັ້ນ ໜ້າຕາຂອງເພິ່ນກໍປ່ຽນສະພາບໃ
ໝ່ ເສື້ອຜ້າຂອງເພິ່ນກໍຂາວຈົ້ວະເຫລື້ອມມາບໆ
9:30 ແລ້ວ ນີ້ແຫລະ ມີສອງຄົນໄດ້ມາເວົ້ານຳເພິ່ນ ຄື ໂມເຊ ກັບ ເອລີຢາ  *ຜູ້ເປັນ-
ປາກເປັນສຽງໃນສະໄໝກ່ອນ*
9:31 ໂຕເຂົາກໍຢູ່ໃນສະພາບສະຫງ່າລາສີຄືກັນ ພວມເວົ້າກັບ ພຣະເຢຊູ ເລື່ອງການ
ຕາຍຂອງເພິ່ນທີ່ໃກ້ຊິເປັນໄປຢູ່ໃນເມືອງ ເຢຣູຊາເລັມ ນັ້ນ

9:32 ຕອນນັ້ນ ເປໂຕ ກັບໝູ່ລູກສິດກໍງ້ວງນອນຫລາຍ ພໍສ່າງນອນເຕັມຕາແລ້ວ
ເຂົາກໍຫລຽວເຫັນ ພຣະເຢຊູ ຢູ່ໃນສະພາບສະຫງ່າລາສີຂອງເພິ່ນ ຢືນຢູ່ກັບສອງ
ຄົນນັ້ນ
9:33 ພໍສອງຄົນນັ້ນພວມລາເພິ່ນໄປ ເປໂຕ ກໍເວົ້າຂຶ້ນມາກັບ ພຣະເຢຊູ ວ່າ "ພວກ
ຜູ້ຂ້າດີໃຈຫລາຍທີ່ໄດ້ມີໂອກາດດີແນວນີ້ ໃຫ້ພວກຜູ້ຂ້າເຮັດຕູບຢູ່ນີ້ສາມຫລັງ
ໃຫ້ອາຈານໜຶ່ງຫລັງ ໂມເຊ ໜຶ່ງຫລັງ ເອລີຢາ ໜຶ່ງຫລັງ" ເປໂຕ ເວົ້າສິ່ງອຳນາດ
ຈັ່ງຊີ້ຍ້ອນວ່າ ລາວ ຮູ້ເທົ່າບໍ່ເຖິງການ
9:34 ເປໂຕ ເວົ້າບໍ່ທັນຂາດຄຳ ກໍໄດ້ມີກ້ອນເມກໄຫລມາຫຸ້ມເຂົາໄວ້ ພວມໄຫລຫຸ້ມ
ຢູ່ນັ້ນເຂົາກໍຕົກໃຈຢ້ານ
9:35 ແລ້ວກໍມີສຽງເວົ້າອອກມາຈາກເມກນັ້ນວ່າ "ຜູ້ນີ້ເປັນລູກທີ່ຮັກແພງຂອງເຮົາ
ທີ່ເຮົາໄດ້ສົ່ງມາ ໃຫ້ຟັງເພິ່ນເອົາເດີ້"
9:36 ພໍໝົດສຽງເວົ້າ ກ້ອນເມກກໍໄຫລອອກໄປ ເຫລືອແຕ່ ພຣະເຢຊູ ແລ້ວລູກສິດ
ນັ້ນບໍ່ໄດ້ເວົ້າໃຫ້ໃຜຟັງແນວທີ່ເຂົາເຫັນນັ້ນ
9:37 ແລ້ວ ມື້ໃໝ່ມາ ພຣະເຢຊູ ໄດ້ພາລູກສິດສາມຄົນນັ້ນລົງມາຈາກພູເຂົານັ້ນ
ແລ້ວ ໄດ້ມີປະຊາຊົນຫລວງຫລາຍໄດ້ມາພໍ້ເພິ່ນ
9:38 ແລ້ວນີ້ແຫລະ ມີຜູ້ຊາຍຜູ້ໜຶ່ງໄດ້ຂໍຮ້ອງ ພຣະເຢຊູ ວ່າ "ອາຈານເອີຍ ຊ່ອຍ
ລູກຊາຍຜູ້ຂ້າແໜ່ທ້ອນ ຜູ້ຂ້າມີລູກຜູ້ດຽວທໍ່ນີ້
9:39 ນີ້ແຫລະ ເຂົາໄດ້ຖືກຜີເຂົ້າຄອບງຳ ຈັກໜ່ອຍກໍພາຮ້ອງໄຫ້ ຈັກໜ່ອຍກໍພາຊັກ
ດີ້ນໄປດີ້ນມາຈົນນ້ຳລາຍຟູມປາກ ແລ້ວມັນກໍອອກຍາກ ນອກຈາກບີບໃຫ້ເຈັບຊ້ຳ
ກ່ອນ
9:40 ຜູ້ຂ້າໄດ້ຂໍໃຫ້ລູກສິດຂອງອາຈານຂັບໄລ່ມັນອອກ ແຕ່ເຂົາບໍ່ສາມາດເຮັດໄດ້"
9:41 ພຣະເຢຊູ ເລີຍເວົ້າ ຕອບຂຶ້ນວ່າ "ໂອ້ຊາດຊົ່ວຊ້າສີກໍ ດານ ຂາດຄວາມເຊື່ອ
ແທ້ ເຮົາຊິຕ້ອງທົນຢູ່ນຳພວກເຈົ້າໂດນປານໃດນໍ້ ນຳລູກເຈົ້າມານີ້ສາ"
9:42 ຕອນ ລາວ ພວມນຳລູກມາ ຜີກໍຄວ່າງເດັກນ້ອຍນັ້ນລົງຊັກດີ້ນຊັກງໍ ແລ້ວ
ພຣະເຢຊູ ເລີຍສັ່ງຫ້າມຜີ ພໍປົວໃຫ້ເຊົາເປັນດີແລ້ວ ພຣະເຢຊູ ກໍສົ່ງເດັກນ້ອຍນັ້ນ
ຄືນໃຫ້ພໍ່ເຂົາ

9:43 ບັດນີ້ ໝົດຄູ່ຄົນກໍພາກັນແປກໃຈງຶດໃນຄວາມຍິ່ງໃຫຍ່ຂອງພຣະເຈົ້າ ຕອນ
ເຂົາພວມງຶດຢູ່ນັ້ນ ພຣະເຢຊູ ກໍເວົ້າກັບລູກສິດວ່າ
9:44 “ໃຫ້ພວກເຈົ້າຈື່ຄໍານີ້ໄວ້ໃນໃຈດັກໆ ເດີ້ ຄືຈັກໜ່ອຍເຮົາຜູ້ເປັນບຸດມະນຸດຊິ
ຖືກທໍລະຍົດ ມອບໄວ້ໃນມືຂອງຄົນເຮັດຕາມໃຈມັກຂອງເຂົາ”
9:45 ແຕ່ພວກລູກສິດບໍ່ເຂົ້າໃຈເລີຍ ຍ້ອນວ່າຄວາມເວົ້ານັ້ນຍັງຖືກປິດບັງໄວ້ບໍ່ໃຫ້
ເຂົ້າໃຈ ແຕ່ວ່າເຂົາບໍ່ກ່າຖາມເພິ່ນໃນເລື່ອງນີ້
9:46 ແລ້ວພວກລູກສິດກໍເກີດຖຽງກັນວ່າ *(ບັດຕັ້ງລາຊະອານາຈັກຂອງພຣະເຈົ້າ
ແລ້ວ)* ໃນພວກເຂົານີ້ໃຜຊິເປັນໃຫຍ່ສໍາຄັນກວ່າໝູ່
9:47 ແຕ່ ພຣະເຢຊູ ກໍຮູ້ຈັກຄວາມຄຶດໃນໃຈຂອງພວກເຂົາ ເລີຍເອີ້ນເດັກນ້ອຍຜູ້
ໜຶ່ງມາຢູ່ຂ້າງໆ ເພິ່ນ
9:48 ແລ້ວໄດ້ບອກລູກສິດວ່າ “ຜູ້ໃດຍອມຮັບເອົາເດັກນ້ອຍນີ້ໃນນາມຂອງເຮົາກໍທໍ່
ກັນກັບຍອມຮັບເຮົາເອງ ແລ້ວຜູ້ທີ່ຍອມຮັບເຮົາກໍທໍ່ກັນກັບຮັບຜູ້ທີ່ໃຊ້ເຮົາມານັ້ນ
ຄືຜູ້ໃດຍອມເປັນຜູ້ນ້ອຍໆໃນພວກເຈົ້ານີ້ ຜູ້ນັ້ນເນາະ ຊິເປັນໃຫຍ່ກວ່າໝູ່”
9:49 ບັດນີ້ ລູກສິດຊື່ ໂຢຮັນ ໄດ້ບອກ ພຣະເຢຊູ ວ່າ “ອາຈານເອີຍ ພວກຜູ້ຂ້າເຫັນ
ຜູ້ໜຶ່ງຂັບໄລ່ຜີອອກໃນນາມຂອງອາຈານ ແລ້ວພວກຜູ້ຂ້າພະຍາຍາມຫ້າມເຂົາ
ໄວ້ ຍ້ອນເຂົາບໍ່ໄດ້ຕິດຕາມໄປນໍາເຮົາ”
9:50 ແຕ່ ພຣະເຢຊູ ບອກວ່າ “ຢ່າຫ້າມເຂົາເດີ້ ຍ້ອນວ່າຜູ້ທີ່ບໍ່ຂັດຂວາງຕໍ່ຕ້ານພວກ
ເຮົາ ຜູ້ນັ້ນກໍຢູ່ຝ່າຍດຽວກັນກັບພວກເຮົາແລ້ວ”
9:51 ແລ້ວຢູ່ມາ ພໍໃກ້ຊິຮອດຍາມທີ່ ພຣະເຢຊູ ຊິຖືກຮັບຂຶ້ນເມືອສະຫວັນແລ້ວ
ເພິ່ນກໍໄດ້ຕັ້ງໜ້າໄປເມືອງ ເຢຣູຊາເລັມ
9:52 ແລ້ວໄດ້ສົ່ງລູກສິດຜູ້ລາງຄົນອອກໄປກ່ອນ ພວມໄປຢູ່ຫັ້ນ ເຂົາໄດ້ເຂົ້າໄປໃນ
ໝູ່ບ້ານໜ້ອງໜຶ່ງຂອງພວກ ຊາມາເຣຍ ເພື່ອຈັດໜ້ອງໄວ້ໃຫ້ເພິ່ນ
9:53 ແຕ່ວ່າໄທບ້ານເຂົາບໍ່ໄດ້ຕ້ອນຮັບຍ້ອນເຂົາຮູ້ວ່າ ພຣະເຢຊູ ຕັ້ງໜ້າຊິໄປເມືອງ
ເຢຣູຊາເລັມ

9:54 ແລ້ວພໍລູກສິດ ຢາໂກໂບ ກັບ ໂຢຮັນ ເຫັນວ່າເຂົາບໍ່ຕ້ອນຮັບ ເຂົາໄປເວົ້າກັບ
ພຣະເຢຊູ ວ່າ “ຊິໃຫ້ຜູ້ຂ້າສັ່ງໄຟລົງມາຈາກສະຫວັນເຜົາໄໝ້ພວກເຂົາໃຫ້ໝົດໄປ
ຄື ເອລີຢາ ເຄີຍເຮັດນັ້ນບໍ້”
9:55 ແຕ່ ພຣະເຢຊູ ຫລຽວໄປຕັກເຕືອນເຂົາວ່າ “ພວກເຈົ້າບໍ່ຮູ້ບໍ້ວ່າ ຈິດໃຈຂອງ
ເຈົ້າພວມຢູ່ຝ່າຍໃດນີ້
9:56 ເຮົາຜູ້ເປັນບຸດມະນຸດບໍ່ໄດ້ມາເພື່ອສັ່ງໃຫ້ຄົນພິນາດ ແຕ່ມາເພື່ອໃຫ້ຄົນລອດ-
ພົ້ນຈາກບາບກຳເວນ” ແລ້ວ ພຣະເຢຊູ ກັບລູກສິດກໍເລີຍອອກໄປພັກຢູ່ໝູ່ບ້ານ
ອື່ນ
9:57 ແລ້ວມັນເປັນໄປທີ່ວ່າ ພວມໄປນຳທາງຢູ່ນັ້ນ ໄດ້ມີຜູ້ຊາຍຜູ້ໜຶ່ງອອກມາຂໍນຳ
ພຣະເຢຊູ ວ່າ “ຜູ້ຂ້າຂໍຕິດຕາມອາຈານແໜ່ ອາຈານຊິພາໄປໃສຜູ້ຂ້າກໍຊິໄປນຳ”
9:58 ແຕ່ ພຣະເຢຊູ ບອກເຂົາວ່າ “ໝາຈອກມີຖໍ້າໃນດິນ ນົກກໍມີຮັງ ແຕ່ວ່າເຮົາຜູ້
ເປັນບຸດມະນຸດບໍ່ມີຮອດໜ້ອງຊິວາງຫົວ”
9:59 ແລ້ວ ພຣະເຢຊູ ໄດ້ຊວນອີກຄົນໜຶ່ງວ່າ “ໃຫ້ຕາມເຮົາມາເດີ້” ແຕ່ຄົນນັ້ນ
ບອກວ່າ “ອາຈານເຈົ້າຂ້າ ຂໍອະນຸຍາດໃຫ້ຜູ້ຂ້າເມືອຝັງສົບຂອງພໍ່ກ່ອນ”
9:60 ແຕ່ ພຣະເຢຊູ ບອກເຂົາວ່າ “ປ່ອຍໃຫ້ພວກຄົນຢູ່ໃນສະພາບຕາຍຝັງຄົນຕາຍ
ຂອງເຂົາເອງ ແຕ່ສ່ວນເຈົ້ານີ້ ໃຫ້ອອກໄປບອກເລື່ອງລາຊະອານາຈັກຂອງພຣະ-
ເຈົ້າເດີ້”
9:61 ແລ້ວມີອີກຄົນໜຶ່ງໄດ້ເວົ້ານຳ ພຣະເຢຊູ ວ່າ “ອາຈານເອີຍ ຜູ້ຂ້າກໍຊິຕິດຕາມ
ອາຈານໄປ ແຕ່ຜູ້ຂ້າຂໍອະນຸຍາດເມືອສັ່ງລາພີ່ນ້ອງໃນເຮືອນກ່ອນ”
9:62 ແຕ່ ພຣະເຢຊູ ບອກເຂົາວ່າ “ບໍ່ເຄີຍມີໃຜທີ່ວາງມືລົງຈັບຫາງໄຖ ແລ້ວຫລຽວ
ເບິ່ງທາງຫລັງອີກ ຈັ່ງເປັນຜູ້ສົມຄວນມີສ່ວນໃນລາຊະອານາຈັກຂອງພຣະເຈົ້າ
ເລີຍ”

## ລູກາ ບົດທີ 10

10:1 ຫລັງຈາກນັ້ນມາ ພຣະເຢຊູ ໄດ້ເລືອກລູກສິດອີກເຈັດສິບຄົນ ແລ້ວສົ່ງເຂົາ
ອອກໄປລ່ວງໜ້າເປັນຄູ່ໆ ໄປຄູ່ເມືອງໜ້ອງທີ່ເພິ່ນຊິໄປ

10:2 ແລ້ວ ພຣະເຢຊູ ໄດ້ບອກພວກເຂົາວ່າ “ງານເກັບກ່ຽວມີຫລາຍອີຫລີ ແຕ່ຄົນ-
ງານກໍມີນ້ອຍ ຈັ່ງຊັ້ນໃຫ້ວອນຂໍນຳເຈົ້າຂອງງານ ໃຫ້ສົ່ງຄົນງານມາເກັບກ່ຽວ
ຊ່ອຍເດີ້
10:3 ໃຫ້ອອກໄປ ໂລດ ເດີ້ ນີ້ແຫລະ ເຮົາສົ່ງພວກເຈົ້າອອກໄປຄືແກະນ້ອຍໄປຢູ່ໃນ
ໝູ່ໝາປ່າ
10:4 ບໍ່ໃຫ້ເອົາກະເປົາເງິນ ເອົາຫີບ ຫລືເກີບ ໄປນຳ ແລ້ວບໍ່ໃຫ້ທັກທາຍໃຜຕາມ
ທາງ
10:5 ແລ້ວບັດເຈົ້າເຂົ້າເຮືອນໃດ ໃຫ້ພອນເຂົາກ່ອນວ່າ ‘ຂໍໃຫ້ສັນຕິພາບມີຢູ່ນຳ
ເຮືອນນີ້ເດີ້’
10:6 ຄັ່ນເຮືອນນັ້ນມີຜູ້ທີ່ມັກສັນຕິ ສັນຕິພາບຂອງເຈົ້າກໍຊິຢູ່ນຳເຂົາ ແຕ່ວ່າຄັ່ນບໍ່ມີ
*ແບບນັ້ນ* ມັນກໍຊິຄືນມາຢູ່ນຳເຈົ້າ
10:7 ແລ້ວໃຫ້ອາໄສຢູ່ເຮືອນນັ້ນ ບໍ່ໃຫ້ຍ້າຍໄປຢ່າງຕໍ່ເນື່ອງ ໃຫ້ຢູ່ກິນນຳເຂົາຕາມທີ່
ເຂົາຈັດໃຫ້ ຍ້ອນວ່າຄົນງານຄວນຮັບການຕອບແທນຕາມທີ່ສົມຄວນກັບງານ
10:8 ບ້ານໃດເມືອງໃດທີ່ຕ້ອນຮັບເຈົ້າກໍໃຫ້ຢູ່ກິນຕາມທີ່ເຂົາຈັດໃຫ້ເດີ້
10:9 ແລ້ວຜູ້ໃດເປັນພະຍາດຫຍັງໃນເຮືອນນັ້ນກໍໃຫ້ປົວເຂົາໃຫ້ເຊົາເປັນດີນຳ ກັບ
ບອກເຂົາວ່າລາຊະອານາຈັກຂອງພຣະເຈົ້າໄດ້ເຂົ້າມາໃກ້ພວກເຈົ້າແລ້ວ
10:10 ແຕ່ວ່າຄັ່ນບ້ານໃດເມືອງໃດບໍ່ຕ້ອນຮັບເຈົ້າ ໃຫ້ເຈົ້າອອກໄປຢູ່ກາງທາງເວົ້າ
ວ່າ
10:11 ‘ແມ່ນແຕ່ຂີ້ຝຸ່ນຂອງເມືອງເຈົ້າທີ່ຕິດເຮົານີ້ ພວກເຮົາສະບັດອອກເປັນພະ-
ຍານຟ້ອງຮ້ອງເຈົ້າ ແຕ່ໃຫ້ຮູ້ກັນໄວ້ວ່າ ລາຊະອານາຈັກຂອງພຣະເຈົ້າໄດ້ເຂົ້າມາ
ໃກ້ພວກເຈົ້າແລ້ວ’
10:12 ແລ້ວ ພຣະເຢຊູ ໄດ້ເວົ້າອີກວ່າ ‘ບັດຮອດມື້ພິພາກສານັ້ນ ໂທດຂອງເມືອງ
ໂສໂດມ ກໍຍັງຊິເບົາກວ່າໂທດຂອງເມືອງນັ້ນອີກ’
10:13 ແລ້ວລະວັງພິນາດເດີ້ ເມືອງ ໂຂຣາຊິນ ກັບເມືອງ ເບດໄຊດາ ເອີຍ ຂະໜາດ
ການອັດສະຈັນຕ່າງໆທີ່ເຮົາໄດ້ເຮັດໃນເມືອງເຈົ້ານີ້ ໄດ້ໄປເຮັດໃນເມືອງ ຕີເຣ ກັບ

ເມືອງ ຊີໂດນ ມາແຕ່ກ່ອນ ພວກເຂົາຄືຊິ ນຸ່ງຜ້າກະສອບນັ່ງຂີ້ເຖົ່າ ກັບໃຈແຕ່ດົນ-
ນານ
10:14 ຄືໃນມື້ພິພາກສາທີ່ຊິມານັ້ນ ການລົງໂທດທີ່ເມືອງ ຕີເຣ ກັບເມືອງ ຊີໂດນ ຊິ
ຕ້ອງແບກນັ້ນ ກໍຊິງ່າຍກວ່າໂທດຂອງພວກເຈົ້າ
10:15 ແລ້ວຝ່າຍເມືອງ ກາເປນາອູມ ເອີຍ ເຈົ້າຜູ້ໄດ້ຮັບການຍົກຍ້ອງສູງຮອດຟ້າ-
ສະຫວັນ ເຈົ້າຊິຖືລາກລົງມາສູ່ນະລົກ”
10:16 *ແລ້ວ ພຣະເຢຊູ ເວົ້າກັບລູກສິດວ່າ* “ຜູ້ໃດທີ່ຟັງພວກເຈົ້າກໍສໍ່າຟັງເຮົາ ແຕ່
ຜູ້ໃດທີ່ດູຖູກພວກເຈົ້າກໍສໍ່າດູຖູກເຮົາ ແລ້ວຜູ້ທີ່ດູຖູກເຮົາ ກໍສໍ່າດູຖູກພຣະເຈົ້າຜູ້ທີ່
ໃຊ້ເຮົາມາ”
10:17 ບັດເຈັດສິບຄົນນັ້ນໄປມາແລ້ວ ເຂົາກໍດີໃຈຫລາຍບອກ ພຣະເຢຊູ ວ່າ “ຂະໜ
າດຜີກໍຍັງຍອມຟັງຄໍາສັ່ງຂອງພວກຜູ້ຂ້າໃນນາມຂອງອາຈານ”
10:18 ແລ້ວ ພຣະເຢຊູ ໄດ້ບອກເຂົາວ່າ “ເຮົາໄດ້ເຫັນ ພະຍາມານ ຊາຕານຕົກລົງ-
ມາຈາກສະຫວັນ ຄືຟ້າຜ່າ
10:19 ນີ້ແຫລະ ເຮົາມອບອໍານາດໃຫ້ພວກເຈົ້າເໜືອພວກສັດທີ່ເປັນພິດ ກັບເໜືອ
ກວ່າອໍານາດຄູ່ແນວຂອງ ພະຍາມານ ຊາຕານຜູ້ເປັນສັດຕູ ແລ້ວບໍ່ມີອີຫຍັງຊິເຮັດ
ໃສ່ພວກເຈົ້າໄດ້
10:20 ກໍຕາມ ຢ່າມົວແຕ່ດີໃຈນໍາຂອງແນວໝູ່ນີ້ທີ່ວ່າພວກຜີຍອມຟັງພວກເຈົ້ານັ້ນ
ແຕ່ໃຫ້ດີໃຈທີ່ວ່າ ຊື່ຂອງເຈົ້າໄດ້ຈົດໄວ້ໃນໜັງສືສໍາມະໂນຄົວຢູ່ເທິງສະຫວັນ
ແລ້ວ”
10:21 ແລ້ວໃນໂມງນັ້ນ ພຣະເຢຊູ ກໍດີໃຈຫລາຍໃນ ພຣະວິນຍານ ແລ້ວຈັ່ງອະທິ-
ຖານຂອບໃຈພຣະເຈົ້າວ່າ “ພໍ່ເອີຍ ຜູ້ເປັນເຈົ້າຂອງຟ້າກັບໂລກ ທີ່ວ່າພໍ່ໄດ້ປິດບັງ
ຄວາມຈິງແນວໝູ່ນີ້ໄວ້ຈາກພວກນັກປັນຍາ ກັບພວກທີ່ອວດດີ ແຕ່ພໍ່ໄດ້ເປີດເຜີຍ
ຕໍ່ຜູ້ທີ່ຍອມຖ່ອມໃຈຄືຜູ້ນ້ອຍໆ ຕາມເປັນທີ່ພໍໃຈຂອງພໍ່
10:22 ພຣະເຈົ້າຜູ້ເປັນພໍ່ໄດ້ມອບຄູ່ອັນຄູ່ແນວໄວ້ກັບລູກແລ້ວ ບໍ່ມີຜູ້ໃດຮູ້ຈັກໃຈພໍ່
ນອກຈາກລູກ ຮ່ວມກັນທັງຜູ້ທີ່ລູກພໍໃຈເປີດເຜີຍໃຫ້ຮູ້ຈັກພໍ່ນໍາ”

10:23 ແລ້ວ ພຣະເຢຊູ ກໍຫລຽວມາເວົ້າກັບພວກລູກສິດເປັນສ່ວນໂຕວ່າ "ຜູ້ທີ່ເຫັນ
ແນວນີ້ທີ່ເຈົ້າເຫັນນີ້ກໍຊິໄດ້ພົບເປັນສຸກນໍາ
10:24 ຍ້ອນວ່າ ຫລາຍສະໄໝຖ່າຍທອດກັນມາແລ້ວ ມີຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າຫລາຍຄົນ ກັບກະສັດຫລາຍອົງ ຄອຍຖ້າຢາກເຫັນຄືກັນກັບພວກເຈົ້າ
ເຫັນນີ້ ແຕ່ບໍ່ໄດ້ເຫັນ ກັບຢາກໄດ້ຍິນຄືກັນກັບພວກເຈົ້າໄດ້ຍິນ ແຕ່ບໍ່ໄດ້ຍິນ"
10:25 ແລ້ວ ນີ້ແຫລະ ໄດ້ມີນັກທໍາຄົນໜຶ່ງ ໄດ້ລຸກຂຶ້ນຖາມລອງໃຈ ພຣະເຢຊູ ວ່າ
"ອາຈານເອີຍ ຂ້ອຍຊິເຮັດຈັ່ງໃດຈັ່ງຊິໄດ້ຊີວິດອັນຕະຫລອດໄປເປັນນິດ"
10:26 ພຣະເຢຊູ ຕອບ ລາວ ເປັນຄໍາຖາມວ່າ "ຄໍາພີບູຮານຂຽນວ່າຈັ່ງໃດ ເຈົ້າອ່ານ
ວ່າແບບໃດ"
10:27 ນັກທໍາຜູ້ນັ້ນຕອບ ພຣະເຢຊູ ວ່າ "ໃຫ້ຮັກພຣະເຈົ້າຈົນໝົດຫົວໃຈ ໝົດຈິດ-
ວິນຍານ ໝົດຄວາມສາມາດ ໝົດສະຕິປັນຍາ ກັບໃຫ້ຮັກເພື່ອນບ້ານຄືກັນກັບ
ຮັກໂຕເອງ"
10:28 ແລ້ວ ພຣະເຢຊູ ບອກເຂົາວ່າ "ເຈົ້າຕອບຖືກແລ້ວ ຄັ້ນເຮັດຈັ່ງຊັ້ນເຈົ້າຊິໄດ້
ຊີວິດ"
10:29 ບັດນີ້ ຄົນນັ້ນຄຶດຢາກແກ້ໂຕ ເລີຍຖາມ ພຣະເຢຊູ ອີກວ່າ "ແລ້ວແມ່ນໃຜ
ເປັນເພື່ອນບ້ານຂອງຂ້ອຍຊັ້ນ"
10:30 ພຣະເຢຊູ ເລີຍເວົ້າເລື່ອງວ່າ "ມີ *ຄົນ ຢິວ* ຄົນໜຶ່ງໄດ້ອອກຈາກ ກຸງເຢຣູຊາ-
ເລັມ ວ່າຊິໄປເມືອງ ເຢຣິໂກ ແຕ່ເຂົາຖືກພວກໂຈນປຸ້ນຢູ່ນໍາທາງ ເອົາໄປໝົດທັງ
ເສື້ອຜ້ານໍາ ຕີເກືອບຕາຍແລ້ວປະຖິ້ມໄວ້ຢູ່ນັ້ນ
10:31 ບັດນີ້ ບັງເອີນມີປະໂລຫິດຄົນໜຶ່ງມານໍາທາງ ພໍເຫັນຜູ້ບາດເຈັບນອນຢູ່ນັ້ນ
ກໍເລີຍຂ້າມທາງຫລີກລ້ຽງກາຍໄປ
10:32 ແລ້ວມີຄົນ ຢິວ ຕະກູນ ເລວີ ມານໍາທາງຄືກັນ ພໍເຫັນຜູ້ບາດເຈັບນັ້ນ ເຂົາກໍ
ເລີຍຂ້າມທາງຫລີກ ລ້ຽງກາຍໄປ
10:33 ແຕ່ວ່າ ບັດນີ້ ມີໄທເມືອງ ຊາມາເຣຍ ຄົນໜຶ່ງໄດ້ມານໍາທາງ ພໍເຫັນຜູ້ບາດ-
ເຈັບຈັ່ງມີໃຈເມດຕາອີຕົນ

10:34 ເຂົ້າເລີຍເຂົ້າໄປຫາຜູ້ບາດເຈັບ ເອົານໍ້າມັນກັບເຫລົ້າອະງຸ່ນລ້າງພວກແຜ
ແລ້ວເອົາຜ້າພັນໄວ້ ແລ້ວອຸ້ມຂຶ້ນຫລັງລາຂອງ ລາວ ພາໄປພັກຢູ່ໂຮງແຮມໜ້ອງ
ໜຶ່ງ ແລ້ວໄດ້ປົວເຂົາຢູ່ນັ້ນ
10:35 ພໍຕື່ນເຊົ້າມາ ກ່ອນ ລາວ ຊິໄປຕໍ່ລາວກໍຝາກເງິນສອງຫລຽນເດນາຣິອົນໃຫ້
ເຈົ້າຂອງໂຮງແຮມ ສັ່ງໄວ້ວ່າ ‘ຊ່ອຍຖືຮັກສາຄົນຜູ້ນີ້ໄວ້ແໜ່ເດີ້ ຄັ່ນເງິນນີ້ຍັງບໍ່ພໍ
ໃຫ້ເຈົ້າອອກກ່ອນ ບັດເຮົາຫລົບຄືນມາເຮົາຊິທົດແທນເຈົ້າ’”
10:36 *ແລ້ວ ພຣະເຢຊູ ກໍຖາມນັກທຳຜູ້ນັ້ນວ່າ* “ຈັ່ງຊັ້ນ ໃນສາມຄົນທີ່ເຮົາເວົ້າມານີ້
ເຈົ້າຄຶດວ່າແມ່ນໃຜເປັນເພື່ອນບ້ານທີ່ດີຕໍ່ຄົນທີ່ຖືກໂຈນປຸ້ນນັ້ນ”
10:37 ບັດນີ້ ນັກທຳຜູ້ນັ້ນຕອບ ພຣະເຢຊູ ວ່າ “ກໍຄົນທີ່ມີໃຈອິຕົນຊ່ອຍນັ້ນ” ແລ້ວ
ພຣະເຢຊູ ບອກເຂົາວ່າ “ຈັ່ງຊັ່ນເນາະ ໃຫ້ເຈົ້າໄປເຮັດຄືກັນເດີ້”
10:38 ຕອນ ພຣະເຢຊູ ພວມເດີນທາງພາກັນໄປກັບລູກສິດນັ້ນ ເພິ່ນໄດ້ແວະຢູ່ໝູ່-
ບ້ານໜຶ່ງ ແລ້ວໄດ້ມີແມ່ຍິງຄົນໜຶ່ງຊື່ ມາທາ ໄດ້ຕ້ອນຮັບ ພຣະເຢຊູ ເຊີນໄປ
ເຮືອນເຂົາ
10:39 ມາທາ ມີນ້ອງສາວຄົນໜຶ່ງຊື່ ມາຣີອາ ມາຣີອາ ນີ້ໄດ້ນັ່ງໃກ້ໆ ພຣະເຢຊູ
ຟັງຄຳສອນຂອງເພິ່ນຢູ່ນັ້ນ
10:40 ແຕ່ວ່າ ມາທາ ຜູ້ເປັນເອື້ອຍກໍມົວແຕ່ເຮັດນຳແນວຢູ່ແນວກິນເລີຍອອກມາຫາ
ພຣະເຢຊູ ແລ້ວເວົ້າວ່າ “ຄືບໍ່ເຫັນໃຈຜູ້ຂ້າແໜ່ ຄືນ້ອງໄດ້ປະໃຫ້ຜູ້ຂ້າເຮັດແລງ
ເຮັດງາຍຢູ່ຜູ້ດຽວ ຊ່ອຍບອກເຂົາໃຫ້ມາຊ່ອຍຜູ້ຂ້າແໜ່”
10:41 ແຕ່ ພຣະເຢຊູ ບອກນາງ ມາທາ ວ່າ “ ມາທາ ເອີຍ ໃຈຂອງເຈົ້າຄືຄຶດຫຍຸ້ງ-
ຍາກນຳຫລາຍອັນຫລາຍແນວແທ້
10:42 ແຕ່ມີແນວດຽວເທົ່ານັ້ນທີ່ຈຳເປັນອີຫລີ ແລ້ວ ມາຣີອາ ໄດ້ເລືອກເອົາແນວດີ
ແນວຖືກນັ້ນແລ້ວ ຊຶ່ງຊິບໍ່ອອກຈາກເຂົາໄປ”

## ລູກາ ບົດທີ 11

11:1 ບັດນີ້ ມັນເປັນໄປທີ່ວ່າ ຕອນ ພຣະເຢຊູ ພວມອະທິຖານເວົ້ານຳພຣະເຈົ້າຢູ່
ໜ້ອງໜຶ່ງ ສຳເລັດແລ້ວມີລູກສິດຜູ້ໜຶ່ງກໍເວົ້ານຳເພິ່ນວ່າ “ຂໍໃຫ້ອາຈານສອນພວກ
ຜູ້ຂ້າໃຫ້ອະທິຖານເປັນແໜ່ ຄືກັນກັບທີ່ ໂຢຮັນ ເຄີຍສອນລູກສິດຂອງ ລາວ ນັ້ນ”

11:2 ພຣະເຢຊູ ເລີຍບອກເຂົາວ່າ “ບັດເຈົ້າອະທິຖານເວົ້ານຳພຣະເຈົ້າ ໃຫ້ເວົ້າທຳ-
ນອງນີ້ເດີ້ ພຣະເຈົ້າຜູ້ເປັນພໍ່ເອີຍ ຂໍໃຫ້ພຣະນາມອັນສັກສິດບໍລິສຸດຂອງພໍ່ ເປັນທີ່
ເຄົາລົບນັບຖື ແລ້ວຂໍໃຫ້ລາຊະອານາຈັກຂອງພໍ່ມາຕັ້ງຢູ່ ກັບຂໍໃຫ້ເປັນໄປຕາມ
ຈຸດປະສົງຂອງພໍ່ໃນໂລກຄືກັນກັບຢູ່ໃນສະຫວັນ
11:3 ກັບຂໍພໍ່ທີ່ຊິປະທານອາຫານການກິນໃຫ້ລູກໆ ຢູ່ຄູ່ມື້ແໜ່
11:4 ກັບຂໍອະໄພໂທດໃຫ້ລູກໆ ຄືກັນກັບທີ່ລູກອະໄພໂທດໃຫ້ຜູ້ອື່ນທີ່ໄດ້ເຮັດຜິດຕໍ່
ລູກ ຂໍໃຫ້ນຳພາລູກໃຫ້ລອດພົ້ນຈາກການທົດລອງຂອງ ພະຍາມານ ຮ້າຍ ອາ-
ເມນ”
11:5 ແລ້ວ ພຣະເຢຊູ ເວົ້າຕໍ່ອີກວ່າ “ສົມມຸດວ່າເຈົ້າມີໝູ່ຄົນໜຶ່ງ ແລ້ວເຈົ້າໄປປຸກ
ລາວ ຍາມທ່ຽງຄືນ ເວົ້າວ່າ ‘ໝູ່ເອີຍ ຂໍຢືມຂະໜົມສາມກ້ອນແໜ່
11:6 ຄືມີແຂກໄດ້ເດີນທາງມາຫາ ແລ້ວເຮົາບໍ່ມີແນວຊິໃຫ້ເຂົາກິນເລີຍ’
11:7 ແຕ່ໝູ່ເຈົ້າຊິຕອບວ່າ ‘ຢ່າກວນເຮົາເດີ້ ປະຕູກໍປິດແລ້ວ ລູກກໍນອນເທິງຕຽງນຳ
ເຮົາ ເຮົາລຸກຊ່ອຍເຈົ້າບໍ່ໄດ້’
11:8 ບັດນີ້ເຮົາຊິບອກເຈົ້າວ່າ ໝູ່ເຈົ້ານັ້ນຊິບໍ່ລຸກຊ່ອຍເຈົ້າຍ້ອນເປັນໝູ່ກັນດອກ ແຕ່
ລາວ ຊິລຸກຊ່ອຍຍ້ອນເຈົ້າໝັ່ນຂໍນຳ ລາວ ບໍ່ຢູ່ບໍ່ເຊົາ ແລ້ວຊິໃຫ້ໝົດຕາມທີ່ເຈົ້າ
ຕ້ອງການ
11:9 ຈັ່ງຊັ່ນ ເຮົາບອກພວກເຈົ້າວ່າ ໝັ່ນວອນຂໍແລ້ວເຈົ້າຊິໄດ້ ໝັ່ນຊອກຫາແລ້ວ
ເຈົ້າຊິພົ້ ໝັ່ນເຄາະປະຕູແລ້ວຊິເປີດໃຫ້ເຈົ້າເດີ້
11:10 ຍ້ອນວ່າ ຜູ້ໃດໝັ່ນຂໍກໍຊິໄດ້ ຜູ້ໃດໝັ່ນຫາກໍຊິພົ້ ຜູ້ໃດໝັ່ນເຄາະກໍຊິເປີດໃຫ້ເດີ້
11:11 ຄັ່ນວ່າ ມີລູກໃນພວກເຈົ້າຂໍເຂົ້າຈີ່ນຳພໍ່ ພໍ່ເຂົາຊິເອົາກ້ອນຫີນໃຫ້ແທນບໍ້ ຫລື
ຄັ່ນລູກຊິຂໍໂຕປາ ພໍ່ເຂົາຊິເອົາງູໃຫ້ແທນບໍ້
11:12 ຫລືຄັ່ນຊິຂໍໄຂ່ ພໍ່ຊິເອົາແມງງອດແມງເງົາໃຫ້ແທນຢູ່ບໍ້
11:13 ຈັ່ງຊັ່ນ ຄັ່ນພວກເຈົ້າແມ່ນແຕ່ເປັນຄົນຊົ່ວ ກໍຍັງຮູ້ຈັກທີ່ຊິເອົາຂອງດີໃຫ້ລູກ
ຂອງເຈົ້າ ຫລາຍກວ່ານັ້ນອີກ ພຣະເຈົ້າຜູ້ເປັນພໍ່ຢູ່ເທິງສະຫວັນ ເພິ່ນຊິບໍ່ໃຫ້
ພຣະວິນຍານ ໃຫ້ກັບຜູ້ທີ່ຂໍຊັ່ນບໍ້”

11:14 ຢູ່ມາ ຕອນ ພຣະເຢຊູ ຂັບໄລ່ຜີອອກຈາກຜູ້ຊາຍຜູ້ໜຶ່ງທີ່ມັນພາເປັນໃບ້ເປັນ
ກືກ ບັດພໍເຊົາກືກກໍເວົ້າໄດ້ ໂລດ ແລ້ວພວກຄົນທັງຫລາຍຢູ່ຫັ້ນກໍພາກັນແປກໃຈ
ງຶດຢ່າງໃຫຍ່
11:15 ແຕ່ມີລາງຄົນຢູ່ນັ້ນຫາວ່າ ພຣະເຢຊູ ໃຊ້ອຳນາດຂອງພະຍາມານຊາຕານທີ່ຊິ
ຂັບໄລ່ຜີອອກ
11:16 ແລ້ວກໍຍັງມີລາງຄົນຊອກລອງດູ ພຣະເຢຊູ ຢາກໃຫ້ເພິ່ນເຮັດເຄື່ອງໝາຍ-
ສຳຄັນຈາກສະຫວັນ *ໃຫ້ເຫັນ*
11:17 ແຕ່ ພຣະເຢຊູ ກໍຮູ້ຈັກແນວຄວາມຄຶດຂອງເຂົາ ເລີຍເວົ້າວ່າ “ລາຊະອານາ-
ຈັກໃດທີ່ເກີດແຕກແຍກກັນກໍຊິທຳລາຍໂຕເອງໃຫ້ລົ້ມ ແລ້ວເຮືອນໃດທີ່ແຕກ-
ແຍກກັນຕ້ອງພັງທະລາຍລົງ
11:18 ຄື ຄັ່ນຜີ ພະຍາມານ ຊາຕານກັບລູກນ້ອງຂອງມັນໄດ້ຂັດແຍ້ງແຕກແຍກກັນ
ພະຍາມານ ຊິປົກຄອງຖິ່ນຖານຂອງມັນໃຫ້ໝັ້ນຄົງໄດ້ຈັ່ງໃດ ຕາມທີ່ພວກເຈົ້າຫາ
ວ່າເຮົາຂັບໄລ່ຜີອອກໂດຍໃຊ້ອຳນາດຂອງພະຍາມານຊາຕານນັ້ນ
11:19 ແລ້ວຄັ່ນເຮົາໃຊ້ອຳນາດຂອງພະຍາມານຊາຕານຕາມທີ່ພວກເຈົ້າເວົ້ານັ້ນ
ແລ້ວໝູ່ເຈົ້າເດ ໄດ້ໃຊ້ອຳນາດມາແຕ່ໃສບັດໄລ່ຜີ ພວກເຂົາຊິເປັນພະຍານຕັດສິນ
ໃຫ້ເຈົ້າເອົາ ໂລດ
11:20 ແຕ່ບັດນີ້ ຄັ່ນແມ່ນເຮົາໃຊ້ອຳນາດຂອງພຣະເຈົ້າຂັບໄລ່ຜີອອກ ກໍສະແດງວ່າ
ລາຊະອານາຈັກຂອງພຣະເຈົ້າ ໄດ້ມາຮອດພວກເຈົ້າແລ້ວ
11:21 ຄືບັດມີນາຍຜູ້ມີອຳນາດ ມີອາວຸດຄົບກໍຊິປ້ອງກັນຖິ່ນຖານຂອງເຂົາຢ່າງເຕັມ
ທີ່ ມູນມັງຂອງເຂົານັ້ນຈັ່ງຊິປອດໄພໝັ້ນຄົງ
11:22 ແຕ່ວ່າບັດມີນາຍຜູ້ມີອຳນາດເໜືອກວ່າໄດ້ມາຕີເອົາຊະນະເຂົາ ນາຍນັ້ນກໍຊິ
ຖືເອົາເອົາອາວຸດຂອງເຂົາ ແລ້ວຂົນເອົາມູນມັງທີ່ຖືເອົາມານັ້ນໄປປັນກັນ
11:23 ຜູ້ທີ່ບໍ່ພ້ອມເຮົາ ຜູ້ນັ້ນກໍສ່ຳຕໍ່ຕ້ານຂັດຂວາງເຮົາ ແລ້ວຜູ້ທີ່ບໍ່ຊ່ອຍເຮົາເກັບມາ
ຜູ້ນັ້ນກໍສ່ຳກະຈັກກະຈາຍອອກໄປ

11:24 ບັດຜີໂສໂຄກອອກຈາກຄົນແລ້ວ ມັນຊິໄປຕົກໜ້ອງແຫ້ງແລ້ງ ແລ້ວທ່ຽວຫາ
ໜ້ອງຫາກໍ່ພາອາໄສ ແຕ່ບັດຫາບໍ່ພໍ້ມັນຊິຄຶດວ່າ ‘ກູຊິຄືນໄປຢູ່ໃນໜ້ອງເກົ່ານັ້ນທີ່
ກູເຄີຍຢູ່’
11:25 ແລ້ວບັດພໍຄືນມາຮອດແລ້ວ ມັນກໍເຫັນວ່າໜ້ອງນັ້ນຖືກກວາດຈັດໄວ້ຮຽບ-
ຮ້ອຍແລ້ວ
11:26 ຜີໂຕນັ້ນເລີຍໄປຊອກຫາໝູ່ຜີອີກເຈັດໂຕທີ່ຊົ່ວແຮງຫລາຍກວ່າມັນໃຫ້ມາຢູ່
ນຳ ແລ້ວໃນທີ່ສຸດສະພາບຊີວິດຂອງຄົນນັ້ນກໍຮ້າຍແຮງກວ່າເກົ່າອີກ”
11:27 ບັດນີ້ ມັນເປັນໄປທີ່ວ່າ ພຣະເຢຊູ ພວມເວົ້າຢູ່ນັ້ນ ມີແມ່ຍິງຄົນໜຶ່ງອອກມາ
ຮ້ອງຂຶ້ນວ່າ “ຂໍໃຫ້ມົດລູກຂອງຍິງທີ່ໃຫ້ທ່ານເກີດມາ ກັບເຕົ້ານົມທີ່ລ້ຽງທ່ານໄດ້
ພົບເປັນສຸກເດີ້”
11:28 ແຕ່ ພຣະເຢຊູ ຕອບວ່າ “ຍິ່ງກວ່ານັ້ນອີກ ຜູ້ທີ່ໄດ້ຍິນ ພຣະຄຳ ຂອງພຣະເຈົ້າ
ແລ້ວເຮັດຕາມຮັກສາໄວ້ ຜູ້ນັ້ນເນາະ ໄດ້ພົບເປັນສຸກ”
11:29 ແລ້ວຕອນມີຄົນຫລວງຫລາຍຫລັ່ງມາຮ່ວມກັນ ພຣະເຢຊູ ກໍໄດ້ເວົ້າວ່າ
“ຊາດນີ້ເປັນຊາດຊົ່ວ ມີແຕ່ຊອກຫາເຄື່ອງໝາຍສຳຄັນຈາກພຣະເຈົ້າແຕ່ຊິບໍ່ມີໃຫ້
ດອກ ມີແຕ່ເຄື່ອງໝາຍສຳຄັນຂອງ ໂຢນາ ຜູ້ເປັນປາກເປັນສຽງຂອງພຣະເຈົ້າໃນ
ສະໄໝກ່ອນ
11:30 ຄື ໂຢນາ ນັ້ນ ເປັນເຄື່ອງໝາຍສຳຄັນຕໍ່ຊາວເມືອງ ນີເນເວ ຈັ່ງໃດ ເຮົາຜູ້ເປັນ
ບຸດມະນຸດຊິເປັນເຄື່ອງໝາຍສຳຄັນຕໍ່ຊາດນີ້ຈັ່ງຊັ້ນ
11:31 ຄືລາຊິນີ ເຊບາ ຜູ້ທີ່ຄອງລາດລາຊະອານາຈັກຢູ່ທາງໃຕ້ ແລ້ວເຄີຍເດີນທາງ
ມາແຕ່ໄກໆ ເພື່ອຟັງສະຕິປັນຍາຂອງກະສັດ ໂຊໂລໂມນ ແລ້ວລາຊິນີ ເຊບາ ນັ້ນ
ລາວກໍຊິລຸກຢືນກ່າວຫາຄົນຊາດນີ້ໃນມື້ພິພາກສາພູ້ນ ຍ້ອນວ່າເຮົາຜູ້ເປັນໃຫຍ່
ກວ່າ ໂຊໂລໂມນ ໄດ້ມາຢູ່ນຳພວກເຈົ້າແລ້ວດຽວນີ້
11:32 ພ້ອມທັງຊາວເມືອງ ນີເນເວ ກໍຊິລຸກຂຶ້ນກ່າວຫາພວກເຈົ້ານຳ ຍ້ອນວ່າພວກ-
ເຂົາໄດ້ກັບໃຈໃໝ່ຍ້ອນການປະກາດຂອງ ໂຢນາ ແທ້ຈິງແລ້ວ ເຮົາຜູ້ເປັນໃຫຍ່
ກວ່າ ໂຢນາ ໄດ້ມາຢູ່ນຳພວກເຈົ້ານີ້ແລ້ວ

11:33 ຄືບໍ່ມີໃຜ ບັດໄຕ້ຕະກຽງແລ້ວເອົາໄປເຊື່ອງໄວ້ໃນໜ້ອງເລິກລັບຫລືວ່າເອົາຄຸ
ຖັງມາງຸມໄວ້ ມີແຕ່ເອົາຕັ້ງໄວ້ເທິງບ່ອນຕັ້ງມັນນັ້ນເນາະ ເພື່ອຄົນເຂົ້າມາຊິໄດ້
ເຫັນຮຸ່ງ
11:34 ແລ້ວຕາຄົນກໍເປັນຄືກັນກັບຕະກຽງຂອງຮ່າງກາຍ ຄັ່ນມັນດີໂຕເຈົ້າຊິເຕັມ
ດ້ວຍຄວາມແຈ້ງ ແຕ່ຄັ່ນມັນບອດເຈົ້າຊິເຕັມດ້ວຍຄວາມມືດ
11:35 ຈັ່ງຊັ່ນ ລະວັງໃຫ້ດີໆ ເດີ້ ຄວາມແຈ້ງຂອງເຈົ້ານັ້ນມັນ ອາດ ຊິເປັນຄວາມມືດ
ກໍໄດ້
11:36 ແຕ່ຄັ່ນໂຕເຈົ້າຢູ່ໃນຄວາມແຈ້ງອີຫລີຢ່າງບໍ່ມີສ່ວນໃດຢູ່ໃນຄວາມມືດເລີຍ
ຊີວິດເຈົ້າກໍຊິຮຸ່ງໄປທົ່ວ ຄືກັນກັບແສງຕະກຽງທີ່ສ່ອງໃຫ້ເຈົ້າເຫັນຮຸ່ງນັ້ນ”
11:37 ພໍ ພຣະເຢຊູ ເວົ້າແລ້ວ ໄດ້ມີນັກສາສະໜາຄະນະ ຟາຣີຊາຍ ຜູ້ໜຶ່ງຊວນເພິ່ນ
ໄປກິນເຂົ້ານໍາ ພຣະເຢຊູ ກໍເລີຍເຂົ້າໄປນັ່ງພາເຂົ້າເພື່ອຊິກິນ
11:38 ພໍນັກສາສະໜາຄະນະ ຟາຣີຊາຍ ນັ້ນເຫັນ ກໍແປກໃຈທີ່ ພຣະເຢຊູ ບໍ່ລ້າງມື
*ຕາມພິທີ* ກ່ອນກິນ
11:39 ພຣະເຢຊູ ເລີຍເວົ້າກັບເຂົາວ່າ “ພວກເຈົ້ານີ້ຄືມັກລ້າງຖ້ວຍຊາມໃຫ້ມັນສະ-
ອາດຢູ່ທາງນອກ ແຕ່ແກ່ນແທ້ຂອງພວກເຈົ້ານີ້ ເຕັມໄປດ້ວຍຄວາມຂີ້ໂລບໜ້າ
ເລືອດ ພ້ອມທັງຄວາມຊົ່ວຮ້າຍໝົດຄູ່ແນວ
11:40 ໂງ່ໝາແທ້ພວກເຈົ້ານີ້ ຄືບໍ່ເຂົ້າໃຈວ່າ ພຣະເຈົ້າຜູ້ໄດ້ສ້າງໂຕຂອງເຈົ້ານັ້ນ ໄດ້
ສ້າງທາງນອກພ້ອມກັບທາງໃນນໍາ
11:41 ຈັ່ງຊັ່ນ ໃຫ້ເຈົ້າຊ່ອຍເຫລືອຄົນອື່ນໆ ຈາກໃຈແນວທີ່ເຈົ້າມີຢູ່ ແລ້ວໝົດຄູ່ຢ່າງ
ກໍຊິຂາວສະອາດໄປນໍາສໍາລັບເຈົ້າ
11:42 ແຕ່ວ່າລະວັງພິນາດເດີ້ ພວກ ຟາຣີຊາຍ ເຈົ້ານີ້ ພວກເຈົ້າມັກຖວາຍຜັກພວງ
ຈີກໆ ພໍເປັນພິທີຊື່ໆ ມັນກໍສົມຄວນຊິຖວາຍຢູ່ ແຕ່ພວກເຈົ້າມັກລະເວັ້ນຄວາມ-
ຍຸດຕິທໍາກັບຄວາມຮັກຂອງພຣະເຈົ້າ
11:43 ລະວັງພິນາດເດີ້ ພວກ ຟາຣີຊາຍ ເຈົ້ານີ້ ຍ້ອນພວກເຈົ້າມັກນັ່ງແຕ່ທາງໜ້ອງ
ມີກຽດໃນໂຮງທໍາ ກັບມັກໃຫ້ຄົນຄໍານັບຢູ່ຕະຫລາດໜ້ອງຕ່າງໆ

11:44 ລະວັງພິນາດເດີ້ ພວກນັກທຳກັບພວກ ຟາຣີຊາຍ ພວກໜ້າຊື່ໃຈຄົດເອີຍ
ພວກເຈົ້າປຽບຄືຫລຸມຝັງສົບອັນບໍ່ຖືກໝາຍໄວ້ ແລ້ວຄົນຍ່າງຢຽບໄປຢຽບມາໂດຍ
ບໍ່ຮູ້ໂຕຊໍ້າ”
11:45 ແລ້ວມີນັກທຳຜູ້ໜຶ່ງເວົ້າຂຶ້ນວ່າ “ອາຈານເອີຍ ເຈົ້າເວົ້າດູໝິ່ນຈັ່ງຊີ້ ມັນກໍຂາຍ
ໜ້າພວກເຮົາ”
11:46 ພຣະເຢຊູ ເລີຍບອກວ່າ “ລະວັງພິນາດຄືກັນເດີ້ ພວກນັກທຳເອີຍ ຍ້ອນ
ພວກເຈົ້າວາງພາລະໜັກໃຫ້ຄົນອື່ນແບກ ບັດໂຕເຈົ້າເອງບໍ່ແຕະຕ້ອງປະຕິບັດ
ຕາມ ແມ່ນແຕ່ປາຍນິ້ວຂອງເຈົ້າ
11:47 ລະວັງພິນາດເດີ້ ຄືພວກເຈົ້າມັກສ້າງອຸບໂມງຝັງສົບໃຫ້ກຽດຜູ້ເປັນປາກ-
ເປັນສຽງຂອງພຣະເຈົ້າໃນສະໄໝກ່ອນ ຊຶ່ງປູ່ຍ່າຕາຍາຍຂອງພວກເຈົ້າຂ້າຖິ້ມ
11:48 ແທ້ຈິງແລ້ວ ທີ່ພວກເຈົ້າເຮັດຈັ່ງຊັ້ນ ໄດ້ເປັນຫຼັກຖານທີ່ຊີ້ແຈງວ່າ ພວກເຈົ້າ
ເຫັນດີນຳປູ່ຍ່າຕາຍາຍຂອງພວກເຈົ້າ ທີ່ເຂົາໄດ້ຂ້າຜູ້ເປັນປາກເປັນສຽງນັ້ນ ແລ້ວ
ພວກເຈົ້າກໍມາສ້າງອຸບໂມງໃຫ້
11:49 ຄືພຣະເຈົ້າຜູ້ມີປັນຍາສູງສຸດໄດ້ເວົ້າວ່າ ‘ເຮົາຊິສົ່ງຜູ້ເປັນປາກເປັນສຽງກັບໂຕ
ແທນພິເສດຂອງເຮົາໄປຫາພວກເຂົາ ແລ້ວຜູ້ຄົນທີ່ເຮົາສົ່ງໄປຫັ້ນ ພວກເຂົາຊິ
ຂົ່ມເຫງແໜ່ ຊິຂ້າແໜ່
11:50 ຈັ່ງຊັ່ນພວກເຈົ້າໃນສະໄໝນີ້ຊິຕ້ອງຮັບຜິດຊອບໃນເລື່ອງເລືອດຂອງຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້າຈາກຄູ່ສະໄໝຕັ້ງແຕ່ສ້າງໂລກມາ
11:51 ນັບຕັ້ງແຕ່ເລືອດຂອງ ອາເບນ ຈົນຮອດເລືອດຂອງ ຊາຂາຣີຢາ ຜູ້ທີ່ຕາຍຢູ່
ລະຫວ່າງແທ່ນບູຊາກັບຫ້ອງສັກສິດໃນເດີ່ນພຣະວິຫານ ເອີ້ ເຮົາບອກພວກເຈົ້າ
ວ່າ ຊິເອົາຄວາມຜິດນຳພວກເຈົ້າຊາດນີ້ໝົດຄູ່ຄະດີ’
11:52 ລະວັງພິນາດເດີ້ ພວກນັກທຳເອີຍ ຍ້ອນວ່າພວກເຈົ້າໄດ້ປິດເອົາຄວາມຮູ້
ທາງເຂົ້າຫາພຣະເຈົ້າໄວ້ ແມ່ນວ່າພວກເຈົ້າເອງບໍ່ຍອມເຂົ້າ ກໍຍັງກີດກັ້ນຂວາງ-
ທາງໄວ້ຈາກຜູ້ທີ່ພວມຊິເຂົ້າ”

11:53 ພໍ ພຣະເຢຊູ ພວມເວົ້າແບບນີ້ໃຫ້ເຂົາຟັງ ພວກນັກທຳ ພຣະຄຳ ກັບພວກ
ຄະນະ ຟາຣີຊາຍ ຢູ່ນັ້ນ ພາກັນໂຈມຕີເວົ້າໃສ່ເພິ່ນຢ່າງຮ້າຍແຮງ ແລ້ວຈັ່ງສອບ-
ສວນເພິ່ນເປັນຫລາຍອັນຫລາຍແບບ
11:54 ຍ້ອນພວກເຂົາໄດ້ວາງແຜນຖ້າຈັບຜິດໃນຄວາມເວົ້າຂອງເພິ່ນ ເພື່ອເປັນຂໍ້
ຄະດີຟ້ອງຮ້ອງເພິ່ນໄດ້

## ລູກາ ບົດທີ 12

12:1 ແລ້ວໃນຕອນນັ້ນ ບັດນີຄົນຫລວງຫລາຍທີ່ນັບບໍ່ຖ້ວນ ໄດ້ມາຮ່ວມກັນ ຈັ່ງ
ບຽດສຽດຢຽບກັນ ພຣະເຢຊູ ເຕືອນລູກສິດໄວ້ວ່າ “ກ່ອນແບບອື່ນ ໃຫ້ລະວັງ
ເຊື້ອຟູຂອງພວກ ຟາຣີຊາຍ ເດີ້ ຊຶ່ງເປັນການໜ້າຊື່ໃຈຄົດ
12:2 ຄືບໍ່ມີຫຍັງທີ່ຖືກປິດບັງປົກປິດໄວ້ທີ່ຊິບໍ່ຖືກເປີດເຜີຍອອກມາ ຫລືບໍ່ມີຫຍັງທີ່
ຖືກເຊື່ອງຊ່ອນໄວ້ທີ່ຊິບໍ່ຮູ້ຈັກກັນເລີຍ
12:3 ຈັ່ງຊັ້ນ ແນວທີ່ເຈົ້າເວົ້າໃນໝ້ອງມືດ ມັນກໍໄດ້ຍິນໃນໝ້ອງແຈ້ງ ແນວທີ່ເຈົ້າ
ເວົ້າຄ່ອຍໆ ໃນຫ້ອງຊັ້ນໃນ ມັນກໍຊິຖືກປະກາດອອກຢູ່ເທິງຫລັງຄາ”
12:4 ແລ້ວ ພຣະເຢຊູ ເວົ້າກັບລູກສິດອີກວ່າ “ໝູ່ພວກເອີຍ ບໍ່ຕ້ອງຢ້ານຜູ້ຄົນທີ່ທຳ-
ລະມານຂ້າໄດ້ແຕ່ໂຕທໍ່ນັ້ນດອກ ບັດຕາຍແລ້ວເຂົາຊິເຮັດຫຍັງໃສ່ເຈົ້າບໍ່ໄດ້ອີກ
12:5 ແຕ່ເຮົາຊິບອກເຈົ້າເຖິງຜູ້ທີ່ເຈົ້າຄວນຢ້ານ ຄືຄວນຢ້ານຜູ້ທີ່ຂ້າແລ້ວ ກໍຍັງສາ-
ມາດທີ່ຊິໂຍນລົງນະລົກໄດ້ນຳ ຜູ້ນັ້ນເນາະທີ່ເຈົ້າຄວນຊິຢ້ານ
12:6 ຂະໜາດນົກຈອກຫ້າໂຕເຂົາຂາຍກັນບໍ່ພໍສອງກີບບໍ່ແມ່ນບໍ່ ແຕ່ວ່າພຣະເຈົ້າກໍ
ຍັງບໍ່ລືມມັນຈັກໂຕ
12:7 ແລ້ວແມ່ນແຕ່ຈຳນວນເສັ້ນຜົມຂອງເຈົ້າ ພຣະເຈົ້າກໍຍັງຮູ້ຈັກວ່າມີທໍ່ໃດ ຈັ່ງຊັ້ນ
ບໍ່ໃຫ້ຢ້ານເດີ້ ຍ້ອນວ່າພວກເຈົ້າແຮງສຳຄັນມີຄຸນຄ່າສູງກວ່າພວກນົກນັ້ນ
12:8 ແລ້ວຄັ່ນຜູ້ໃດຍິນດີຮັບວ່າເປັນລູກສິດຂອງເຮົາຕໍ່ໜ້າຄົນທັງຫລາຍ ເຮົາຜູ້
ເປັນບຸດມະນຸດກໍຊິຍິນດີຮັບວ່າເຮົາຮູ້ຈັກເຂົາຢູ່ຕໍ່ໜ້າເທວະທູດຂອງພຣະເຈົ້າ
12:9 ແຕ່ຜູ້ທີ່ປະຕິເສດເຮົາ ບໍ່ຍອມຮັບວ່າໄດ້ຮູ້ຈັກເຮົາຍ້ອນເຫັນແກ່ໜ້າຜູ້ຄົນ ເຮົາ
ກໍຊິບໍ່ຍອມຮັບວ່າເຮົາຮູ້ຈັກເຂົາຢູ່ຕໍ່ໜ້າເທວະທູດຂອງພຣະເຈົ້າຄືກັນ

12:10 ແລ້ວຜູ້ໃດທີ່ເວົ້າດູຖູກດູໝິ່ນເຮົາຜູ້ເປັນບຸດມະນຸດ ກໍຍົກໂທດໃຫ້ເຂົາໄດ້ ແຕ່-
ວ່າຜູ້ທີ່ເວົ້າດູຖູກດູໝິ່ນ ພຣະວິນຍານ ຂອງພຣະເຈົ້າ ກໍຊິບໍ່ມີການໃຫ້ອະໄພຈັກ-
ເທື່ອ
12:11 ແລ້ວບັດຍາມພວກຄົນຊິມາຫາຈັບພວກເຈົ້າ ນຳໄປຫາເລື່ອງໃນໂຮງທຳ ຫລື
ນຳໄປຕໍ່ໜ້າພວກຫົວໜ້າເຈົ້າເມືອງ ບັດເຂົາສອບຖາມເຈົ້າ ເຈົ້າບໍ່ຕ້ອງຄຶດຍາກ
ອຸກອັ່ງໃນໃຈເດີ້ ວ່າຊິຕອບແບບໃດ
12:12 ຍ້ອນວ່າ ບັດຮອດຍາມນັ້ນ ພຣະວິນຍານ ຂອງພຣະເຈົ້າກໍຊິສອນເຈົ້າໃຫ້ຮູ້-
ຈັກວ່າຄວນຊິຕອບແບບໃດ”
12:13 ພຣະເຢຊູ ພວມສອນຢູ່ນັ້ນໄດ້ມີຜູ້ໜຶ່ງເວົ້າຂຶ້ນວ່າ “ອາຈານເອີຍ ຊ່ອຍບອກ
ອ້າຍຜູ້ຂ້າໃຫ້ແບ່ງປັນມູນມັງໃຫ້ຜູ້ຂ້ານຳແໜ່”
12:14 ແຕ່ ພຣະເຢຊູ ຕອບເຂົາວ່າ “ນາຍເອີຍ ແມ່ນໃຜຕັ້ງເຮົາໃຫ້ເປັນຄົນກາງແບ່ງ
ມູນໃຫ້ພວກເຈົ້າ”
12:15 ແລ້ວ ພຣະເຢຊູ ໄດ້ເວົ້າກັບພວກຄົນຢູ່ຫັ້ນວ່າ “ລະວັງໂຕໃຫ້ດີເດີ້ ໃຫ້ໜີຈາກ
ຄວາມຂີ້ໂລບເດີ້ ຍ້ອນວ່າຊີວິດຂອງຄົນບໍ່ໄດ້ຂຶ້ນຢູ່ກັບເຂົ້າຂອງເງິນທອງຂອງ
ເຂົາ”
12:16 ແລ້ວ ພຣະເຢຊູ ໄດ້ເວົ້າເລື່ອງປຽບທຽບໃຫ້ພວກເຂົາຟັງວ່າ “ໄຮ່ນາຂອງຄົນ
ຮັ່ງມີຄົນໜຶ່ງອອກຜົນດີກຫລາຍ
12:17 ຄົນນີ້ນັ່ງຄຶດໃນໃຈວ່າ ‘ເຂົ້າຂອງກູມີຫລາຍຄືນີ້ຊິເຮັດແນວໃດດີນໍ້ຈັ່ງຊິມີ
ບ່ອນພໍຊິໃສ່ໃຫ້ເກັບໄດ້ໝົດ’
12:18 ເອີ້ ຄຶດອອກແລ້ວ ກູຊິຮື້ພວກເລົ້າເຂົ້າເກົ່າ ແລ້ວຊິສ້າງໃໝ່ໃຫ້ມັນໃຫຍ່ກວ່າ
ເກົ່າ ແລ້ວມັນຈັ່ງຊິມ້ຽນເຂົ້າໄດ້ໝົດພ້ອມທັງຊັບຂອງກູນຳ
12:19 ກູເອງຄືຮັ່ງມີແທ້ ກູມີຊັບຫລາຍທີ່ສະສົມໄວ້ເພື່ອຫລາຍປີ ກູໃຫ້ສະບາຍໂຕ
ສາ ນັ່ງກິນນອນກິນ ເມົາເຮຮາມ່ວນຊື່ນໄດ້ເລີຍ”
12:20 ແຕ່ພຣະເຈົ້າໄດ້ເວົ້າກັບເຂົາວ່າ “ໄອ້ໂງ່ເອີຍ ມື້ແລງນີ້ຊິເຖິງຄາວແລ້ວທີ່ເຈົ້າ
ຕ້ອງມາຣາຍງານໂຕຕໍ່ໜ້າເຮົາ ແລ້ວເຂົ້າຂອງເງິນທອງທີ່ເຈົ້າໄດ້ມ້ຽນໄວ້ນັ້ນ ມັນ
ຊິຕົກເປັນຂອງໃຜ”

12:21 ແລ້ວ ພຣະເຢຊູ ວ່າ “ມັນເປັນຈັ່ງຊັ່ນແລ້ວ ຝ່າຍຜູ້ທີ່ມົວແຕ່ເກັບເຂົ້າຂອງ
ເງິນທອງເພື່ອເຈົ້າຂອງ ແຕ່ບໍ່ມີສົມບັດໃນທາງຂອງພຣະເຈົ້າ”
12:22 ແລ້ວ ພຣະເຢຊູ ໄດ້ເວົ້ານຳລູກສິດວ່າ “ຈັ່ງຊີ້ເນາະ ເຮົາບອກພວກເຈົ້າວ່າ ຢ່າ
ຄຶດກັງວົນຫລາຍນຳຊີວິດ ຂອງໂຕ ວ່າຊິເອົາຫຍັງມາກິນ ຫລືທາງຮ່າງກາຍວ່າຊິ
ເອົາຫຍັງມານຸ່ງຫົ່ມ
12:23 ຍ້ອນວ່າການມີຊີວິດຢູ່ກໍບໍ່ໄດ້ຂຶ້ນຢູ່ກັບແນວຢູ່ແນວກິນ ແລ້ວຮ່າງກາຍກໍບໍ່ໄດ້
ຂຶ້ນຢູ່ກັບເສື້ອຜ້າໜ້າແພແນວດຽວ
12:24 ຄຶດເບິ່ງ ພວກການັ້ນ ມັນບໍ່ໄດ້ດຳກັບບໍ່ໄດ້ກ່ຽວ ກັບບໍ່ມີເລົ້າມີໂຮງ ແຕ່ພຣະ-
ເຈົ້າລ້ຽງມັນໄວ້ ແລ້ວພວກເຈົ້າມີຄຸນຄ່າສູງກວ່າພວກກາໃນສາຍຕາຂອງພຣະ-
ເຈົ້າຫລາຍສ່ຳໃດ
12:25 ມີໃຜແໜ່ໃນພວກເຈົ້າທີ່ສາມາດເອົາຄວາມກັງວົນມາຕໍ່ຄວາມສູງຂອງໂຕຂຶ້ນ
ອີກສອກໜຶ່ງ
12:26 ຄັ່ນເຈົ້າບໍ່ສາມາດເຮັດຂອງນ້ອຍໆ ນ້ອຍໆ ສ່ຳນີ້ ເປັນຫຍັງເຈົ້າຈັ່ງຄຶດກັງວົນ
ໃນເລື່ອງອື່ນໆ
12:27 ຄຶດເບິ່ງ ດອກໄມ້ງາມໆ ນັ້ນ ມັນໃຫຍ່ຂຶ້ນມາກໍບໍ່ໄດ້ເສຍແຮງຕ່ຳຜ້າຕ່ຳແພ
ແຕ່ຂະໜາດກະສັດ ໂຊໂລໂມນ ແຕ່ງໂຕງາມມີຄວາມສະຫງ່າຣາວໃດ ກໍຍັງສູ້
ດອກໄມ້ນຳໝູ່ນີ້ບໍ່ໄດ້ຈັກດອກເລີຍ
12:28 ແລ້ວຄັ່ນແມ່ນພຣະເຈົ້າຕົກແຕ່ງດອກໄມ້ດອກຫຍ້າຂຶ້ນມາໃຫ້ສວຍງາມຈັ່ງຊີ້
ຊຶ່ງມື້ນີ້ມັນກໍຢູ່ດີ ແຕ່ມື້ອື່ນຊິຖືກຫລົກເອົາໄປອ່ອຍໄຟໃນເຕົາ ບັດນີ້ພຣະເຈົ້າເພິ່ນ
ຊິໃຫ້ເຈົ້າມີເສື້ອຜ້າໜ້າແພນຸ່ງຫົ່ມບໍ່ແມ່ນບໍ້ ເຈົ້າຜູ້ມີຄວາມເຊື່ອນ້ອຍເອີຍ
12:29 ຈັ່ງຊັ່ນຢ່າຊອກຄຶດຫຍຸ້ງຍາກໃຈຫລາຍວ່າຊິເອົາຫຍັງມາຢູ່ມາກິນ ຄືຢ່າໃຫ້
ໃຈເຈົ້າກັງວົນເລີຍ
12:30 ຄືພວກຄົນທັງໂລກ *ທີ່ບໍ່ຮູ້ຈັກພຣະເຈົ້າ* ກໍມົວແຕ່ຊອກຫາຂອງແນວໝູ່ນີ້ ແຕ່
ສຳລັບພວກເຈົ້ານີ້ ພຣະເຈົ້າຜູ້ເປັນພໍ່ຂອງເຈົ້າກໍຮູ້ຈັກວ່າ ເຈົ້າຕ້ອງການແນວໝູ່ນີ້
ຢູ່ແລ້ວ

12:31 ຈັ່ງຊັ້ນໃຫ້ເຈົ້າສະແຫວງຫາລາຊະອານາຈັກຂອງພຣະເຈົ້າຊະກ່ອນ *ໝ້ອງ*
*ເພິ່ນເປັນໃຫຍ່ໃນຊີວິດ* ແລ້ວເພິ່ນຊິເພີ່ມເຕີມແນວໝູ່ນີ້ໃຫ້ເຈົ້າໝົດ
12:32 ຈັ່ງຊັ້ນບໍ່ໃຫ້ຢ້ານເດີ້ ຝູງແກະນ້ອຍເອີຍ ຄືພຣະເຈົ້າຜູ້ເປັນພໍ່ຂອງເຈົ້າຍິນດີທີ່
ຊິມອບລາຊະອານາຈັກຂອງເພິ່ນໃຫ້ເຈົ້າແລ້ວ
12:33 ຈັ່ງຊັ້ນ ໃຫ້ຂາຍຂອງໆ ເຈົ້າ ແລ້ວນຳເງິນນັ້ນໄປຊ່ອຍຄົນຈົນ ແລ້ວສະສົມ
ເງິນທີ່ບໍ່ເປື່ອຍເນົ່າ ເປັນຊັບໃນສະຫວັນທີ່ບໍ່ສູນເສຍ ໝ້ອງທີ່ໂຈນໄປໃກ້ບໍ່ໄດ້ ກັບ
ແມງເຈາະກິນບໍ່ໄດ້
12:34 ຍ້ອນວ່າຊັບຂອງເຈົ້າຢູ່ໃສໃຈຂອງເຈົ້າກໍຊິຢູ່ນັ້ນ
12:35 ໃຫ້ພວກເຈົ້າກຽມພ້ອມ ໄຕ້ຕະກຽງໄວ້ຢູ່ສະເໝີເດີ້
12:36 ແລ້ວຝ່າຍພວກເຈົ້ານີ້ ໃຫ້ຄືພວກຂ້າທາດຮັບໃຊ້ທີ່ຄອຍຖ້າຮັບນາຍຂອງເຈົ້າ
ບັດເພິ່ນຫລົບເມືອຈາກງານກິນດອງນັ້ນ ເພື່ອວ່າບັດເພິ່ນມາເຄາະປະຕູກໍຊິໄດ້
ເປີດຮັບເພິ່ນເອົາ ໂລດ
12:37 ແລ້ວພວກຂ້າທາດທີ່ກຽມພ້ອມຖ້າຮັບນາຍນັ້ນຊິໄດ້ພົບເປັນສຸກ ບັດນາຍ
ເຂົາກັບມາເຫັນຄອຍຖ້າຢູ່ ເຮົາຊິເວົ້າໃຫ້ຟັງຕາມຊື່ນີ້ເນາະ ນາຍນັ້ນກໍຊິໃຫ້ເຂົາ
ນັ່ງໂຕະ *ແທນເພິ່ນ* ແລ້ວນາຍກໍຊິລົງມືຮັບໃຊ້ເຮັດແນວກິນລ້ຽງພວກເຂົາ ໂລດ
12:38 ນາຍຊິມາຕອນຄ່ຳຫລືຕອນເດິກກໍຕາມ ທີ່ນາຍມາພໍ້ພວກເຂົາພວມຖ້າ ພວກ
ຂ້າທາດຮັບໃຊ້ນັ້ນກໍຊິໄດ້ພົບເປັນສຸກ
12:39 ແລ້ວໃຫ້ຮູ້ໄວ້ວ່າ ຄັ່ນເຈົ້າຂອງເຮືອນຮູ້ຈັກໄວ້ກ່ອນ ຍາມທີ່ຂະໂມຍຊິມາ
ລາວກໍຊິກຽມພ້ອມໄວ້ ບໍ່ໃຫ້ເຮືອນຂອງ ລາວ ຖືກບຸກລຸກເຂົ້າໄປ
12:40 ຈັ່ງຊັ້ນ ໃຫ້ພວກເຈົ້າກຽມພ້ອມຢູ່ສະເໝີເດີ້ ຍ້ອນວ່າເຮົາຜູ້ເປັນບຸດມະນຸດ ຊິ
ມາໃນຍາມທີ່ພວກເຈົ້າບໍ່ນຶກບໍ່ຝັນເລີຍ”
12:41 ບັດນີ້ ເປໂຕ ເລີຍຖາມ ພຣະເຢຊູ ວ່າ “ທີ່ເວົ້າມານີ້ໄດ້ເຈາະຈົ່ງແຕ່ພວກຂ້ອຍ
ຜູ້ເປັນລູກສິດເທົ່ານັ້ນບໍ້ ຫລືວ່າຮ່ວມກັນທັງໝົດຄູ່ຄົນນຳ”
12:42 ພຣະເຢຊູ ເລີຍເວົ້າວ່າ “ແມ່ນໃຜແໜ່ ໄດ້ເປັນຂ້າທາດຮັບໃຊ້ທີ່ມີປັນຍາເຊື່ອ
ໃຈໄດ້ ທີ່ນາຍຊິໄດ້ຕັ້ງໄວ້ໃຫ້ເບິ່ງແຍງເຮືອນຂອງ ລາວ ກັບໃຫ້ມີແນວຢູ່ແນວກິນ
ຕາມເວລາ

12:43 ຄົນໃຊ້ຜູ້ນັ້ນກໍ່ຊິໄດ້ພົບເປັນສຸກບັດຍາມນາຍຫລົບມາພໍ້ປະຕິບັດຕາມໜ້າທີ່
12:44 ເຮົາຊິເວົ້າໃຫ້ຟັງຕາມຊື່ນີ້ເນາະ ນາຍຜູ້ນັ້ນຊິຕັ້ງໃຫ້ເປັນຫົວໜ້າເບິ່ງແຍງຊັບ-
ສົມບັດຂອງ ລາວ ທີ່ມີທັງໝົດ
12:45 ແຕ່ຄັ່ນວ່າ ຄົນໃຊ້ຜູ້ນັ້ນຄຶດວ່ານາຍຄືຊິບໍ່ມາງ່າຍ ແລ້ວຂ້ຽນຕີແຕ່ໝູ່ຄົນໃຊ້ບໍ່
ວ່າຍິງວ່າຜູ້ຊາຍ ມົວແຕ່ກິນແຕ່ເມົາ
12:46 ແລ້ວບັດພໍນາຍຫລົບມາໃນຍາມທີ່ຄົນໃຊ້ຜູ້ນັ້ນບໍ່ເບິ່ງ ບໍ່ຄຶດບໍ່ຝັນ ນາຍກໍ່ຊິ
ຂ້ຽນຢ່າງຮ້າຍແຮງຈົນໂຕຊິຈີກຂາດ ແລ້ວຂັບໄລ່ໃຫ້ໄປຢູ່ໃນເຂດຂອງພວກທີ່ບໍ່
ເຊື່ອ
12:47 ແລ້ວຄົນໃຊ້ຜູ້ນັ້ນ ທີ່ຮູ້ຈັກໃຈຂອງນາຍ ແຕ່ບໍ່ກຽມພ້ອມຫລືເຮັດຕາມຈຸດປະ-
ສົງ ມັນກໍ່ຊິຕ້ອງຖືກແສ້ຂ້ຽນເປັນຮອຍຫລາຍຮອຍ
12:48 ແຕ່ຝ່າຍຜູ້ທີ່ບໍ່ຮູ້ຈັກ ແຕ່ຍັງເຮັດແນວທີ່ສົມຄວນຊິຖືກແສ້ ຜູ້ນັ້ນຊິຖືກແສ້ນ້ອຍ
ກວ່າ ແຕ່ສຳລັບຜູ້ທີ່ຮັບມອບຫລາຍ ຜູ້ນັ້ນຊິຕ້ອງຮັບຜິດຊອບຫລາຍ ແລ້ວຜູ້ທີ່ໄວ້
ໃຈຫລາຍ ຜູ້ນັ້ນກໍ່ຕ້ອງຣາຍງານໂຕຫລາຍ”
12:49 ແລ້ວ ພຣະເຢຊູ ເວົ້າວ່າ “ຄືເຮົາໄດ້ນຳໄຟມາຊິເຜົາໂລກ ໃຈເຮົາຢາກໃຫ້ມັນ
ແລ້ວຊະດຽວນີ້
12:50 ແຕ່ໂຕເຮົາຕ້ອງເຂົ້າສູ່ແນວໜຶ່ງຊະກ່ອນ ຊຶ່ງເຮັດໃຫ້ເຮົາໜັກໃຈຫລາຍກວ່າ
ມັນຊິສຳເລັດ
12:51 ຄັ່ນພວກເຈົ້າຄຶດວ່າເຮົາມາເພື່ອນຳຄວາມສຸກມາສູ່ໂລກກໍ່ເຂົ້າໃຈຜິດໄປ ແຕ່
ເຮົາວ່າບໍ່ແມ່ນຈັ່ງຊັ່ນ ຄືເຮົາເປັນເຫດໃຫ້ຄົນເກີດແຕກແຍກກັນ
12:52 ຄືແຕ່ນີ້ໄປ ຫ້າຄົນໃນເຮືອນດຽວກັນຊິແຕກຮ້າວກັນ ສາມຕໍ່ສອງ ຫລື ສອງຕໍ່
ສາມ
12:53 ຄືພໍ່ຊິແຕກແຍກກັນກັບລູກຊາຍ ກັບລູກຊາຍຊິແຕກແຍກກັນກັບພໍ່ ແລ້ວແມ່
ຊິແຕກແຍກກັນກັບລູກສາວ ກັບລູກສາວຊິແຕກແຍກກັນກັບແມ່ ແລ້ວລູກໄພ້ຊິ
ແຕກແຍກກັນກັບແມ່ຍ່າ ກັບແມ່ຍ່າຊິແຕກແຍກກັນກັບລູກໄພ້”
12:54 ແລ້ວ ພຣະເຢຊູ ໄດ້ເວົ້າກັບຄົນທັງຫລາຍອີກວ່າ “ບັດຍາມເຫັນກ້ອນເມກ
ມືດຄຶ້ມລອຍມາ ເຈົ້າກໍ່ຍັງຮູ້ວ່າຝົນຊິຕົກ ແລ້ວມັນກໍ່ຕົກອີຫລີ

12:55 ແລ້ວບັດຍາມເຈົ້າເຫັນລົມພັດມາແຕ່ທາງໃຕ້ ພວກເຈົ້າກໍຍັງຮູ້ວ່າມື້ນັ້ນຊິ
ຮ້ອນ ແລ້ວມັນກໍຮ້ອນອີຫລີ
12:56 ພວກໜ້າຊື່ໃຈຄົດເອີຍ ພວກເຈົ້າກໍຍັງສາມາດອ່ານດິນຟ້າອາກາດອອກໄດ້
ເປັນຫຍັງບໍ່ສາມາດອ່ານເຫດການແນວໝູ່ນີ້ອອກໄປໄດ້ນໍາ
12:57 ເອີ້ ແລ້ວເປັນຫຍັງ ແມ່ນແຕ່ໃນພວກເຈົ້າເອງ ກໍຍັງບໍ່ສາມາດຕັດສິນແນວ
ມັນຖືກມັນແມ່ນເອົາເອງ
12:58 ຕາມຫລັກແລ້ວ ບັດຍາມພວກເຈົ້າຊິຂຶ້ນສານກັບຝ່າຍກົງກັນຂ້າມ ເຈົ້າກໍຍັງ
ພາກັນໄປຕໍ່ໜ້າຝ່າຍຕຸລາການກ່ອນ ຫາທາງຕົກລົງຄືນດີກັນຊະກ່ອນ ເພື່ອຊິໃຫ້
ເລື່ອງຈົບລົງໄດ້  ຢ້ານວ່າຝ່າຍກົງກັນຂ້າມ ອາດ ລາກເຈົ້າໄປຕໍ່ໜ້າຜູ້ພິພາກສາ
ແລ້ວຜູ້ພິພາກສາຊິມອບໄວ້ໃນມືຂອງເຈົ້າໜ້າທີ່ສານ ແລ້ວເຈົ້າໜ້າທີ່ສານຊິໂຍນ
ເຈົ້າເຂົ້າໄປໃນຄຸກ
12:59 ເຮົາຊິບອກເຈົ້າເດີ້ 'ບັດເຂົ້າຄຸກແລ້ວເຈົ້າຊິບໍ່ມີມື້ອອກ ມີແຕ່ຊິຕິດຄຸກຢູ່ນັ້ນ
ຈົນຈ່າຍໜີ້ໝົດຮອດຄູ່ກີບ'"

## ລູກາ ບົດທີ 13

13:1 ແລ້ວມີລາງຄົນຢູ່ນັ້ນໄດ້ຍົກເລື່ອງພວກຄົນ ກາລີເລ ໃຫ້ ພຣະເຢຊູ ຟັງ ຕອນທີ່
ປີລາດ ສັ່ງປົນເລືອດຂອງພວກເຂົາກັບເລືອດເຄື່ອງບູຊາຂອງເຂົາ
13:2 ພຣະເຢຊູ ເລີຍຕອບວ່າ "ພວກເຈົ້າຄຶດວ່າພວກຄົນ ກາລີເລ ນັ້ນ ຄືຊິເປັນຄົນ
ບາບຫລາຍກວ່າໝູ່ເນາະ ຈັ່ງຊິຕາຍໂຫງແນວນີ້
13:3 ເຮົາຊິເວົ້າຕາມຊື່ນີ້ເນາະ ມັນບໍ່ແມ່ນດອກ ຄັນພວກເຈົ້າບໍ່ກັບໃຈໃໝ່ *ຄືນດີກັບ
ພຣະເຈົ້າ* ພວກເຈົ້າກໍຊິພິນາດຄືກັນ
13:4 ແລ້ວພວກເຈົ້າຄືຊິເຂົ້າໃຈວ່າສິບແປດຄົນທີ່ຖືກຫໍລົບແຖວ ຊີໂລອາມ ທັບຕາຍ
ນັ້ນຄືຊິມີບາບຫລາຍກວ່າໝູ່ໃນເມືອງ ເຢຣູຊາເລັມ ເນາະ
13:5 ແຕ່ເຮົາບອກພວກເຈົ້າວ່າ ມັນບໍ່ແມ່ນແລ້ວ ຄັນພວກເຈົ້າບໍ່ກັບໃຈໃໝ່ຄືນດີ
ກັບພຣະເຈົ້າ ພວກເຈົ້າກໍຊິພິນາດຄືກັນ"

13:6 ແລ້ວ ພຣະເຢຊູ ເລີຍເວົ້າເລື່ອງປຽບທຽບໃຫ້ເຂົາຟັງວ່າ “ມີຜູ້ໜຶ່ງປຸກຕົ້ນໝ
າກເດື່ອໄວ້ໃນສວນອະງຸ່ນຂອງເຂົາ ຢູ່ມາພໍຮອດຍາມລາວກໍອອກໄປວ່າຊິເກັບ
ຜົນຜະລິດ ແຕ່ມັນບໍ່ເປັນໝາກເປັນຜົນຈັກໜ່ອຍ”
13:7 ລາວ ເລີຍບອກນາຍສວນວ່າ “ເບິ່ງ ສາມປີຕໍ່ໆ ກັນແລ້ວເຮົາມາວ່າຊິເກັບໝ
າກເດື່ອຈາກກົກນີ້ ແຕ່ບໍ່ເຫັນເປັນໝາກຈັກປີ ໂຄ່ນຄ້ານມັນຖິ້ມ ໂລດ ເດີ້ ເອົາໄວ້
ເຮັດຫຍັງ ມັນມີແຕ່ກິນເນື້ອທີ່ຊື່ໆ”
13:8 ແຕ່ນາຍສວນຕອບວ່າ “ເອົາໄວ້ຊະກ່ອນອີກຈັກປີໜຶ່ງ ຂ້ອຍຊິຄຸ້ຍເຂ່ຍດິນໃສ່
ປຸຍຮັກສາມັນລອງເບິ່ງ
13:9 ແລ້ວຄັ່ນມັນເປັນໝາກເປັນຜົນປີໜ້າ ກໍຊິເປັນການດີ ແຕ່ຄັ່ນບໍ່ແມ່ນກໍໃຫ້ບັກ-
ລົງ ໂລດ ”
13:10 ຢູ່ມາ ພຣະເຢຊູ ພວມສັ່ງສອນຢູ່ໃນໂຮງທຳໂຮງໜຶ່ງໃນມື້ພັກງານຂອງ
ພວກຢິວ
13:11 ແລ້ວນີ້ແຫລະ ຢູ່ນັ້ນມີແມ່ຍິງຄົນໜຶ່ງທີ່ຖືກຜີເຮັດໃຫ້ຫລັງງ່ອມຢຽດໂຕບໍ່ໄດ້
ເປັນມາສິບແປດປີແລ້ວ
13:12 ພໍ ພຣະເຢຊູ ຫລຽວເຫັນ ເພິ່ນກໍເລີຍເວົ້າກັບ ລາວ ວ່າ “ນາງເອີຍເຈົ້າຖືກ
ປ່ອຍໃຫ້ຫວິດຈາກພະຍາດເຈົ້າແລ້ວ”
13:13 ເວົ້າແລ້ວ ພຣະເຢຊູ ກໍຢື້ມືອອກແຕະໃສ່ຜູ້ ລາວ ເລີຍເຊົາເປັນດີກັບໝ້ອງ
ນາງກໍເລີຍຍົກຍ້ອງສັນລະເສີນພຣະເຈົ້າຢ່າງໃຫຍ່ທີ່ຢຽດຫລັງໄດ້
13:14 ບັດນີ້ ເຈົ້າໜ້າທີ່ເບິ່ງແຍງໂຮງທຳໄດ້ໂຕ້ຕອບດ້ວຍຄວາມບໍ່ພໍໃຈ ຍ້ອນ
ພຣະເຢຊູ ໄດ້ມາປົວຄົນໃນມື້ພັກງານ ເລີຍເວົ້າໃຫ້ພວກຄົນຢູ່ໃນນັ້ນຟັງວ່າ “ມີຢູ່
ຫົກມື້ທີ່ຄົນຄວນຊິເຮັດງານ ຈັ່ງຊັ່ນໃຫ້ມາປົວໂລກກັນຕອນນັ້ນແມະ ຢ່າມາເຮັດ
ໃນມື້ພັກງານ”
13:15 ພຣະເຢຊູ ເລີຍເວົ້າໃສ່ເຈົ້າໜ້າທີ່ຜູ້ນັ້ນວ່າ “ໂອ່ ຄົນໜ້າຊື່ໃຈຄົດເອີຍ ບໍ່ແມ່ນ
ພວກເຈົ້າຄູ່ຄົນແກ້ງົວແກ້ລາຂອງໂຕອອກຈາກຄອກ ແລ້ວຈູງໄປກິນນ້ຳໃນມື້ພັກ-
ງານຄືກັນບໍ່ແມ່ນບໍ້

13:16 ແລ້ວຄຶດເບິ່ງ ສ່ວນແມ່ຍິງຄົນນີ້ ຜູ້ເປັນລູກສາວເຊື້ອສາຍຂອງ ອັບຣາຮາມ ຄື
ກັນ ຊຶ່ງ ລາວ ຖືກຜີ ພະຍາມານ ຊາຕານຜູກມັດໄວ້ໃນຄອກຂອງມັນມາຮອດສິບ
ແປດປີແລ້ວ ຊຶ່ງໄດ້ປ່ອຍອອກມາໃນມື້ພັກງານນີ້”
13:17 ພໍ ພຣະເຢຊູ ເວົ້າຈັ່ງຊີ້ ພວກຄັດຄ້ານທີ່ຕໍ່ສູ້ເພິ່ນກໍຂາຍໜ້າອັບອາຍຢ່າງໃຫຍ່
ແຕ່ໝົດຄູ່ຄົນຢູ່ຫັ້ນ ກໍພາກັນຍົກຍ້ອງຄູ່ແນວອັນດີງາມທີ່ ພຣະເຢຊູ ໄດ້ເຮັດ
13:18 ແລ້ວ ພຣະເຢຊູ ເວົ້າວ່າ “ພວກເຈົ້າຮູ້ຈັກບໍ່ວ່າລາຊະອານາຈັກຂອງພຣະເຈົ້າ
ຄືກັບຫຍັງ ເຮົາຊິເອົາຫຍັງມາປຽບທຽບດີນໍ້
13:19 ເອີ້ ມັນຄືເມັດພືດເມັດນ້ອຍໆ ຂອງຜັກຜັກກາດ ທີ່ຄົນເອົາໄປປູກໃນສວນ
ຂອງໂຕ ແລ້ວມັນກໍແຕກຂຶ້ນມາເປັນຕົ້ນເປັນພຸ່ມ ຈົນວ່າພວກນົກມາເຮັດຮັງອາ-
ໄສຢູ່ນໍາງ່າຂອງມັນ”
13:20 ແລ້ວ ພຣະເຢຊູ ເວົ້າອີກວ່າ “ເຮົາຊິເອົາຫຍັງມາປຽບທຽບນໍ້ ລາຊະອານາ-
ຈັກຂອງພຣະເຈົ້ານີ້
13:21 ເອີ້ ມັນປຽບຄືເຊື້ອຟູທີ່ແມ່ຄົວປະສົມຄົນໄວ້ໃນແປ້ງໝີ່ສາມຕວງ ຈົນແປ້ງນັ້ນ
ຟູຂຶ້ນໄປໝົດ”
13:22 ແລ້ວຕອນ ພຣະເຢຊູ ພວມຊິໄປເມືອງ ເຢຣູຊາເລັມ ຜ່ານບ້ານໃດເມືອງໃດ
ເພິ່ນກໍໄດ້ສອນຄົນຢູ່ນັ້ນ
13:23 ແລ້ວໄດ້ມີຄົນໜຶ່ງຖາມເພິ່ນວ່າ “ນາຍຜູ້ຂ້າເອີຍ ແມ່ນບໍ້ຄົນທີ່ຊິລອດພົ້ນບາບ
ຊິມີນ້ອຍ” ພຣະເຢຊູ ຕອບວ່າ
13:24 “ເຮົາຊິເວົ້າໃຫ້ຟັງຕາມຊື່ນີ້ເນາະ ໃຫ້ເຈົ້າຕັ້ງໃຈເຂົ້າທາງປະຕູຄັບແຄບເດີ້ ຄື
ມີຫລາຍຄົນຊິພະຍາຍາມເຂົ້າໄປແຕ່ບໍ່ສາມາດເຂົ້າໄດ້
13:25 ຍ້ອນວ່າ ບັດເຈົ້າຂອງເຮືອນໄດ້ລຸກໄປປິດປະຕູແລ້ວ ພວກເຈົ້າທີ່ຍັງຢູ່ທາງ
ນອກຊິມາເຄາະປະຕູ ຮ້ອງວ່າ ຊ່ອຍເປີດໃຫ້ແໜ່ທ້ອນນາຍຜູ້ຂ້າເອີຍ ແຕ່ ລາວ
ຊິບອກພວກເຈົ້າວ່າ ‘ເຈົ້າມາແຕ່ໃສ ເຮົາບໍ່ຮູ້ຈັກກັນກັບເຈົ້າ’
13:26 ແລ້ວພວກເຈົ້າຊິເລີ່ມອ້າງວ່າ ‘ພວກເຮົາເຄີຍໄດ້ກິນໄດ້ດື່ມກັນກັບນາຍກັບ
ເຄີຍຟັງນາຍສອນຕາມບ້ານຕາມເມືອງຂອງເຮົາ’

13:27 ແຕ່ເຈົ້າຂອງເຮືອນຊິຕອບວ່າ ‘ເຮົາເຄີຍບອກພວກເຈົ້າແລ້ວ ເຮົາບໍ່ຮູ້ຈັກກັນ-
ກັບເຈົ້າ ອອກໄປໃຫ້ພົ້ນເຮົາເດີ້ ພວກຊົ່ວຊ້າທີ່ເຮັດແຕ່ແນວຊົ່ວຮ້າຍ’
13:28 ໄປຢູ່ໝ້ອງທີ່ມີແຕ່ການກັດແຂ້ວຮ້ອງໄຫ້ບັດຫລຽວເຫັນ ອັບຣາຮາມ ກັບ ອີ-
ຊາກ ກັບ ຢາໂຄບ ກັບພວກຜູ້ເປັນປາກເປັນສຽງທັງໝົດ ຢູ່ໃນລາຊະອານາຈັກ-
ຂອງພຣະເຈົ້າ ຊຶ່ງພວກເຈົ້າຖືກໂຜດຖິ້ມອອກໄປຢູ່ທາງນອກ
13:29 ແລ້ວຊິມີຄົນຈາກທິດທັງສີ່ທົ່ວໂລກ ມານັ່ງຮ່ວມກິນໂຕະໃນລາຊະອານາຈັກ-
ຂອງພຣະເຈົ້າ
13:30 ແທ້ຈິງແລ້ວ ຊິມີຄົນນ້ອຍຜູ້ບໍ່ສຳຄັນຢູ່ນີ້ ຊິກາຍເປັນຄົນໃຫຍ່ຜູ້ສຳຄັນຢູ່ພູ້ນ
ແລ້ວຊິມີຄົນໃຫຍ່ຜູ້ສຳຄັນຢູ່ນີ້ ຊິກາຍເປັນຄົນນ້ອຍຜູ້ບໍ່ສຳຄັນຢູ່ພູ້ນ”
13:31 ແລ້ວພໍດີໃນມື້ນັ້ນ ມີພວກຄະນະ ຟາຣີຊາຍ ຜູ້ລາງຄົນມາເຕືອນ ພຣະເຢຊູ
ວ່າ “ໃຫ້ອອກຈາກໝ້ອງນີ້ໄປເດີ້ ຍ້ອນວ່າເຈົ້າເມືອງ ເຮໂຣດ ຢາກຊິຂ້າເຈົ້າ”
13:32 ແຕ່ ພຣະເຢຊູ ເວົ້າວ່າ “ໃຫ້ໄປບອກໝາປ່າຄົນນັ້ນວ່າ ເຮົາຊິຂັບໄລ່ຜີ ກັບ
ຮັກສາຄົນໃຫ້ເຊົາພະຍາດເປັນດີ ມື້ນີ້ ມື້ອື່ນ ກັບມື້ຮືພູ້ນ ຈົນກວ່າວຽກງານຂອງ
ເຮົາຊິແລ້ວ
13:33 ຈັ່ງໃດກໍຕາມ ເຮົາຊິຕ້ອງເດີນທາງຕໍ່ຢ່າງຕໍ່ເນື່ອງ ມື້ນີ້ ມື້ອື່ນ ກັບມື້ຮືພູ້ນ ຍ້ອນ
ວ່າ ບໍ່ເຄີຍມີຜູ້ເປັນປາກເປັນສຽງຂອງພຣະເຈົ້າທີ່ຖືກຂ້າຢູ່ທາງນອກເມືອງ ເຢຣູ-
ຊາເລັມ ”
13:34 *ແລ້ວ ພຣະເຢຊູ ເວົ້າວ່າ* “ໂອ່ ເຢຣູຊາເລັມໆ ເອີຍ ຜູ້ທີ່ຂ້າຜູ້ເປັນປາກເປັນ-
ສຽງ ກັບຄວ່າງກ້ອນຫີນໃສ່ຜູ້ທີ່ສົ່ງມາ ເຮົາເຄີຍພະຍາຍາມຕ້ອນມາຫາເຮົາ
ຫລາຍເທື່ອແລ້ວ ຄືແມ່ໄກ່ກຸກລູກມາຢູ່ໃຕ້ປີກ ແຕ່ພວກເຈົ້າກໍບໍ່ຍອມເລີຍ
13:35 ນີ້ແຫລະ ເຮົາຊິເວົ້າຕາມຊື່ນີ້ເນາະ ເຮືອນຂອງເຈົ້າ ຊິຖືກປະຮ້າງ ແລ້ວພວກ
ເຈົ້າຊິບໍ່ເຫັນເຮົາອີກຕໍ່ໄປ ຈົນກວ່າຊິຮອດມື້ທີ່ພວກເຈົ້າຮັບປາກວ່າ ‘ຂໍໃຫ້ພຣະ-
ກຽດມີແດ່ທ່ານ ຜູ້ທີ່ມາໃນນາມຂອງອົງພຣະຜູ້ເປັນເຈົ້າເຖີ້ນ’”

# ລູກາ ບົດທີ 14

14:1 ບັດນີ້ ມັນເປັນທີ່ວ່າ ພຣະເຢຊູ ພວມເຂົ້າເຮືອນຜູ້ນຳຄົນໜຶ່ງໃນພວກຄະນະ
ຟາຣີຊາຍ ວ່າຊິກິນເຂົ້າ ເປັນມື້ພັກງານຂອງຄົນ ຢິວ ແລ້ວພວກເຂົາກໍພາກັນ
ຊອມເບິ່ງຖ້າຈັບຜິດເພິ່ນ
14:2 ແລ້ວ ນີ້ແຫລະ ມີຜູ້ຊາຍຜູ້ໜຶ່ງເປັນພະຍາດບວມນໍ້າ ຢູ່ທາງໜ້າ ພຣະເຢຊູ
14:3 ແລ້ວ ພຣະເຢຊູ ກໍເລີຍຖາມພວກນັກທຳກັບພວກນັກສາສະໜາຄະນະ ຟາຣີ-
ຊາຍ ຢູ່ນັ້ນ ລອງເບິ່ງວ່າ “ຄັນຊ່ອຍປົວຄົນໃຫ້ເຊົາພະຍາດເປັນດີໃນມື້ພັກງານນີ້
ມັນຊິຜິດກົດບັນຍັດຢູ່ບໍ້”
14:4 ແຕ່ພວກເຂົາບໍ່ປາກເລີຍ ພຣະເຢຊູ ເລີຍປົວພະຍາດບວມນໍ້າໃຫ້ຜູ້ຊາຍຜູ້ນັ້ນ
ໃຫ້ເຊົາເປັນດີ ແລ້ວກໍປ່ອຍເຂົາໄປ
14:5 ແລ້ວເພິ່ນຫັນມາຖາມພວກຄົນຢູ່ຫັ້ນວ່າ “ໃນພວກເຈົ້ານີ້ມີໃຜເຄີຍມີງົວມີລາທີ່
ຕົກນໍ້າສ້າງໃນມື້ພັກງານ ແລ້ວບໍ່ໄດ້ຟ້າວເອົາຂຶ້ນ ໂລດ ບໍ້”
14:6 ບັດນີ້ ພວກເຂົາປາກບໍ່ອອກ ຕອບເພິ່ນບໍ່ໄດ້ເລີຍໃນເລື່ອງນີ້
14:7 ຈັ່ງຊັ້ນ ບັດພໍ ພຣະເຢຊູ ສັງເກດວ່າພວກແຂກທີ່ມານັ້ນ ເຂົາມັກຊິເລືອກນັ່ງໃນ
ໝ້ອງດີໆ ທີ່ມີກຽດ ເພິ່ນກໍເລີຍເວົ້າເລື່ອງປຽບທຽບໃຫ້ເຂົາຟັງວ່າ
14:8 “ບັດຍາມເຂົາເຊີນພວກເຈົ້າໄປງານກິນດອງ ຢ່າສູ່ຂຶ້ນໄປນັ່ງໝ້ອງດີໆ ທີ່ມີ
ກຽດຫລາຍເດີ້ ຫາລາງເທື່ອເຈົ້າພາບເພິ່ນໄດ້ເຊີນແຂກທີ່ມີກຽດຫລາຍກວ່າເຈົ້າ
14:9 ແລ້ວເຈົ້າພາບຜູ້ເຊີນມານັ້ນ ລາວ ຊິມາບອກເຈົ້າໃຫ້ລຸກໃຫ້ຜູ້ນັ້ນມານັ່ງແທນ
ແລ້ວເຈົ້າຊິຕ້ອງໄປນັ່ງໝ້ອງຕໍ່າທີ່ບໍ່ມີກຽດ ໄປອັບອາຍຂາຍໜ້າຢູ່ນັ້ນ
14:10 ແຕ່ວ່າ ບັດເຂົາເຊີນເຈົ້າໄປໃນງານ ໃຫ້ໄປຫານັ່ງຢູ່ໝ້ອງບໍ່ຄ່ອຍມີກຽດ ແລ້ວ
ບັດເຈົ້າພາບມາ ເພິ່ນ ອາດ ຊິເວົ້າວ່າ ‘ໝູ່ເອີຍ ເຊີນຂຶ້ນໄປນັ່ງຢູ່ໝ້ອງມີກຽດ
ຫລາຍເດີ້’ ແລ້ວເຈົ້າກໍຊິມີກຽດຕໍ່ໜ້າຕໍ່ຕາໝົດຄູ່ຄົນທີ່ຮ່ວມໂຕະນຳກັນກັບເຈົ້າ
14:11 ຄືຜູ້ໃດຍົກໂຕຊອກຫາແຕ່ກຽດໃຫ້ເຈົ້າຂອງ ຊິຕ້ອງຖືກຖ່ອມລົງ ແຕ່ວ່າຄັນ
ຜູ້ໃດຮູ້ຈັກຖ່ອມໂຕລົງ ຜູ້ນັ້ນຊິຮັບການຍົກຂຶ້ນໃຫ້ມີກຽດ”

14:12 ແລ້ວ ພຣະເຢຊູ ເວົ້າກັບ ຟາຣີຊາຍ ຜູ້ທີ່ເຊີນເພິ່ນມານັ້ນວ່າ “ບັດຍາມເຈົ້າຈັດ
ງານລ້ຽງຕ່າງໆ  ຢ່າເຊີນແຕ່ໝູ່ແຕ່ພີ່ນ້ອງ ຫລືເພື່ອນບ້ານຜູ້ຮັ່ງມີມາຫລາຍ ບໍ່ຊັ້ນ
ເຂົາຊິເຊີນເຈົ້າໄປເປັນການຕອບແທນບຸນຄຸນກັນຊື່ໆ
14:13 ແຕ່ວ່າ ບັດເຈົ້າຈັດງານລ້ຽງ ໃຫ້ເຊີນພວກຄົນຈົນ ຄົນພິການ ຄົນເປ້ຍ ກັບ
ຄົນຕາບອດດີກວ່າ
14:14 ແລ້ວເຈົ້າຊິໄດ້ພົບເປັນສຸກຫລາຍ ຍ້ອນຄົນພວກນີ້ບໍ່ສາມາດຕອບແທນບຸນ-
ຄຸນອີຫຍັງເຈົ້າໄດ້  ແຕ່ເຈົ້າຊິໄດ້ການຕອບແທນໃນມື້ທີ່ຄົນຂອງພຣະເຈົ້າຄືນມາ
ຈາກຕາຍພຸ້ນ”
14:15 ບັດນີ້ ມີຜູ້ໜຶ່ງທີ່ຮ່ວມໂຕະນຳກັນກັບ ພຣະເຢຊູ  ບັດພໍໄດ້ຍິນເວົ້າແນວນີ້ກໍ
ເລີຍເວົ້າກັບເພິ່ນວ່າ “ຄົນທີ່ຮ່ວມໂຕະກິນກັນໃນລາຊະອານາຈັກຂອງພຣະເຈົ້າ
ນັ້ນກໍຊິໄດ້ພົບເປັນສຸກຫລາຍ ເນາະ”
14:16 ແລ້ວ ພຣະເຢຊູ ເວົ້າກັບຜູ້ນັ້ນເປັນເລື່ອງປຽບທຽບວ່າ “ມີນາຍຄົນໜຶ່ງໄດ້ຈັດ
ງານກິນລ້ຽງໃຫຍ່ໂຕ ແລ້ວໄດ້ເຊີນຄົນໄວ້ຫລາຍໆ ຄົນ
14:17 ແລ້ວບັດໃກ້ຮອດຍາມກິນລ້ຽງ ນາຍກໍໃຊ້ຄົນໃຊ້ຂອງ ລາວ ໃຫ້ໄປເອີ້ນພວກ
ຄົນທີ່ໄດ້ເຊີນໄວ້ນັ້ນວ່າ ‘ເຊີນມາເດີ້ ໝົດທູ່ແນວໄດ້ກຽມໄວ້ແລ້ວ’
14:18 ແຕ່ພວກຄົນທີ່ເພິ່ນເຊີນໄວ້ນັ້ນມີແຕ່ພາກັນແກ້ໂຕ ຜູ້ໜຶ່ງກໍເວົ້າວ່າ ‘ເຮົາຫາກໍ່
ຊື້ທີ່ນາມາໃໝ່ໆ ຕ້ອງໄປເລາະເບິ່ງຊະກ່ອນ ເຮົາຊິຂໍໂຕແໜ່’
14:19 ອີກຜູ້ໜຶ່ງກໍເວົ້າວ່າ ‘ເຮົາໄດ້ຊື້ງົວໃໝ່ຫ້າຄູ່ ພວມຊິໄປລອງເບິ່ງມັນດຽວນີ້ ເຮົາ
ເລີຍຂໍໂຕແໜ່’
14:20 ແລ້ວຍັງອີກຜູ້ໜຶ່ງກໍເວົ້າວ່າ ‘ເຮົາຫາກໍແຕ່ງເມຍ ເຮົາໄປບໍ່ໄດ້ດອກ’
14:21 ໄປມາແລ້ວ ຄົນໃຊ້ນັ້ນກໍຣາຍງານໃຫ້ນາຍຟັງຕາມຄຳປະຕິເສດແນວທີ່ຄົນ
ໄດ້ເວົ້ານັ້ນ ພໍນາຍໄດ້ຍິນກໍບໍ່ພໍໃຈຫລາຍ ເລີຍສັ່ງຄົນໃຊ້ນັ້ນອີກວ່າ ‘ໃຫ້ຟ້າວ
ອອກໄປໄວໆ ຕາມທາງຕາມຮອຍທົ່ວເມືອງເດີ້ ໄປຫາເຊີນຄົນຈົນ ຄົນພິການ
ຄົນເປ້ຍ ພ້ອມຄົນຕາບອດ ໃຫ້ມາກິນນຳກັນເດີ້’
14:22 ແລ້ວຄົນໃຊ້ນັ້ນກໍເວົ້າວ່າ ‘ນາຍເອີຍ ຜູ້ຂ້າໄດ້ໄປຫາເຊີນເຂົາມາໝົດແລ້ວ
ແລ້ວຍັງມີໜ້ອງຫວ່າງອີກຫລາຍ’

14:23 ນາຍເລີຍບອກອີກວ່າ 'ຈັ່ງຊັ່ນ ໃຫ້ອອກໄປຕາມຖະໜົນຫົນທາງແຖວບ້ານ
ນອກຄອກນາ ແລ້ວພໍ້ໃຜກໍໃຫ້ເຊີນມາ ໂລດ ເພື່ອເຮືອນຂອງເຮົານີ້ຊິໄດ້ເຕັມ'
14:24 ຄືເຮົາຊິບອກເຈົ້າວ່າ 'ຄົນພວກນັ້ນທີ່ເຮົາໄດ້ເຊີນໄວ້ ເຮົາຊິບໍ່ໃຫ້ມາຮ່ວມໂຕະ
ຊີມຈັກຄຳເລີຍ'"
14:25 ບັດນີ້ ໄດ້ມີຄົນຫລວງຫລາຍພາກັນໄປນຳ ພຣະເຢຊູ ແລ້ວເພິ່ນໄດ້ຫລຽວມາ
ເວົ້າກັບພວກເຂົາວ່າ
14:26 "ຄັ່ນຜູ້ໃດມາຫາເຮົາ ຜູ້ນັ້ນຕ້ອງຮັກເຮົາຫລາຍກວ່າຮັກພໍ່ແມ່ ທັງລູກເມຍ ທັງ
ພີ່ນ້ອງຊາຍຍິງ ເອີ້ ແມ່ນແຕ່ຊີວິດໂຕເອງນຳ ບໍ່ຊັ່ນຜູ້ນັ້ນຊິເປັນລູກສິດຂອງເຮົາບໍ່
ໄດ້ເລີຍ
14:27 ແລ້ວຜູ້ໃດບໍ່ສະລະຊີວິດແບກເອົາໄມ້ກາງແຂນຂອງໂຕເອງ ແລ້ວຕາມເຮົາ
ມາ ຜູ້ນັ້ນຊິເປັນລູກສິດຂອງເຮົາບໍ່ໄດ້
14:28 ຄື ມີໃຜໃນພວກເຈົ້າທີ່ຕັ້ງໃຈຊິສ້າງຫໍຄອຍຖ້າ ຊິບໍ່ໄດ້ນັ່ງລົງໄລ່ເບິ່ງເງິນຊະ
ກ່ອນ ວ່າມີພໍທີ່ຊິເຮັດໃຫ້ມັນແລ້ວຫລືບໍ່
14:29 ບໍ່ຊັ່ນ ຫາລາງເທື່ອ ບັດລົງມືຊິສ້າງ ແລ້ວບໍ່ສາມາດເຮັດໃຫ້ມັນສຳເລັດ ຄູ່
ຄົນທີ່ເຫັນກໍຊິຫົວຂວັນເຍາະເຍີ້ຍເຂົາ
14:30 ວ່າ ຄົນນີ້ມີໂຄງການສ້າງແຕ່ບໍ່ສາມາດເຮັດໃຫ້ມັນແລ້ວ
14:31 ຫລືວ່າຊິມີພະຍາເມືອງໃດທີ່ມີທະຫານແຄ່ໝື່ນດຽວ ບັດຍາມພະຍາເມືອງ
ອື່ນຜູ້ມີທະຫານສອງໝື່ນຄົນຍົກທັບຊິມາຕີ ພະຍາຜູ້ມີທະຫານແຄ່ໝື່ນດຽວນັ້ນຊິ
ບໍ່ປຶກສາຫາລືກັນຊະກ່ອນບໍ້ ວ່າກຳລັງມີພໍຊິສູ້ເຂົາໄດ້
14:32 ຫລືວ່າ ບັດພະຍາຜູ້ມີກຳລັງຫລາຍກວ່າຍັງຢູ່ແຕ່ໄກໆ ພະຍາຜູ້ມີກຳລັງ
ນ້ອຍກວ່າຊິສົ່ງຄະນະຜູ້ແທນອອກໄປເຈລະຈາຖາມຂໍ້ຕົກລົງໃຫ້ຄືນດີກັນຊະ
ກ່ອນ
14:33 ຈັ່ງຊັ່ນເນາະ ແມ່ນໃຜກໍຢ່າໃນພວກເຈົ້ານີ້ ຄັ່ນບໍ່ຍອມສະລະໝົດຄູ່ອັນຄູ່ແນວ
ຊະກ່ອນ ບໍ່ມີທາງທີ່ເຂົາຊິເປັນລູກສິດຂອງເຮົາໄດ້
14:34 ເວົ້າພື້ນ ເກືອນີ້ເປັນປະໂຫຍດໄດ້ຫລາຍແນວ ແຕ່ຄັ່ນຄວາມເຄັມຈືດຈາງລົງ
ໄປແລ້ວ ຊິເຮັດຈັ່ງໃດໃຫ້ມັນຄືນລົດຊາດເຄັມອີກ

14:35 ຊິໃຊ້ປັບປຸງດິນກໍບໍ່ໄດ້ ຊິເປັນປຸຍຄອກກໍບໍ່ໄດ້ນຳ ມີແຕ່ຊິໂຍນຖິ້ມຊື່ໆ ໃຜມີຫູ
ກໍໃຫ້ຟັງເອົາເດີ້"

# ລູກາ ບົດທີ 15

15:1 ແລ້ວພວກຄົນເກັບພາສີ ກັບພວກຄົນຂີ້ບາບທັງໝົດໄດ້ພາກັນເຂົ້າມາໃກ້
ພຣະເຢຊູ ເພື່ອຟັງເພິ່ນສອນ
15:2 ແລ້ວພວກຄະນະ ຟາຣີຊາຍ ກັບນັກທຳພາກັນຈົ່ມຕິວ່າ "ຄົນນີ້ຕ້ອນຮັບກັບ
ຮ່ວມກິນກັບຄົນຂີ້ບາບ"
15:3 ພຣະເຢຊູ ເລີຍເວົ້າຄຳປຽບທຽບໃຫ້ຄົນຢູ່ນັ້ນຟັງວ່າ
15:4 "ຜູ້ໃດໃນພວກເຈົ້າທີ່ມີແກະຮ້ອຍໂຕ ແລ້ວມັນເຮ່ຍໄປໂຕໜຶ່ງ ຊິບໍ່ປະແກະ
ເກົ້າສິບເກົ້າໂຕນັ້ນໄວ້ໃນທົ່ງຊະກ່ອນ ແລ້ວໄປຊອກຫາໂຕທີ່ເຮ່ຍໄປນັ້ນຈົນພໍ້
15:5 ແລ້ວບັດພໍ້ ກໍຂຶ້ນໃສ່ບ່າແບກຄືນມາຢ່າງດີອົກດີໃຈ
15:6 ບັດເມືອຮອດບ້ານແລ້ວ ກໍໄປຫາເຊີນໝູ່ພວກມາຮ່ວມກັນເວົ້າວ່າ 'ມາຍິນດີ
ນຳເຮົາເດີ້ ຍ້ອນເຮົາໄດ້ແກະໂຕທີ່ຫລົງຫາຍໄປນັ້ນຄືນມາແລ້ວ'
15:7 ແລ້ວ ພຣະເຢຊູ ບອກເຂົາວ່າ 'ແນວນີ້ເນາະ ຊິມີຄວາມຍິນດີໃນສະຫວັນເພື່ອ
ຄົນບາບຄົນໜຶ່ງທີ່ກັບໃຈ ຫລາຍກວ່າເພື່ອເກົ້າສິບເກົ້າຄົນນັ້ນທີ່ບໍ່ຕ້ອງກັບໃຈ
*ຍ້ອນດີແລ້ວ'*
15:8 ຫລື ມີແມ່ຍິງຄົນໃດທີ່ມີເງິນສິບຫລຽນ ແລ້ວເຮັດເຮ່ຍຫລຽນໜຶ່ງ ແລ້ວ ລາວ ຊິ
ບໍ່ໄຕ້ຕະກຽງຄົ້ນຫາທົ່ວເຮືອນຈົນພໍ້ບໍ່ແມ່ນບໍ້
15:9 ແລ້ວບັດ ລາວ ພໍ້ຫລຽນແລ້ວ ກໍໄດ້ເຊີນໝູ່ພວກມາຮ່ວມກັນເວົ້າວ່າ 'ໃຫ້ດີອົກ-
ດີໃຈນຳເຮົາເດີ້ ຍ້ອນວ່າເຮົາໄດ້ເງິນຫລຽນທີ່ເຮ່ຍໄປນັ້ນຄືນມາແລ້ວ'
15:10 ເຮົາຊິບອກພວກເຈົ້າວ່າ ຄືກັນແລ້ວ ຊິມີຄວາມຍິນດີຕໍ່ໜ້າເທວະທູດຂອງ
ພຣະເຈົ້າເຖິງຄົນບາບຄົນໜຶ່ງທີ່ກັບໃຈ"
15:11 ແລ້ວ ພຣະເຢຊູ ເວົ້າຕໍ່ອີກວ່າ "ມີຜູ້ຊາຍຜູ້ໜຶ່ງມີລູກຊາຍສອງຄົນ
15:12 ແລ້ວຜູ້ນ້ອງນັ້ນໄດ້ເວົ້າກັບພໍ່ວ່າ 'ພໍ່ເອີຍ ມູນມັງສ່ວນໃດທີ່ຊິແບ່ງໃຫ້ລູກກໍ
ເອົາໃຫ້ລູກຊະ' ແລ້ວຜູ້ເປັນພໍ່ກໍເລີຍແບ່ງມູນມັງຂອງເຂົາໃຫ້ລູກທັງສອງຄົນ

15:13 ຢູ່ມາອີກບໍ່ຈັກມື້ ຜູ້ນ້ອງນັ້ນກໍໄດ້ເອົາມູນມັງຂອງໂຕຮ່ວມກັນໄວ້ ຈັ່ງເດີນທາງ
ໄປເຂດໄກໆ ແລ້ວໄດ້ທ່ຽວໄປມາຢ່າງຟຸ່ມເຟືອຍຢູ່ຫັ້ນຈົນເສຍມູນມັງຂອງເຂົາ
ໝົດໄປ
15:14 ພໍເຂົາໃຊ້ໝົດແລ້ວ ເຂດນັ້ນໄດ້ເກີດແຫ້ງແລ້ງອຶດແນວຢູ່ແນວກິນ ເຂົາຈັ່ງ
ທຸກຍາກລຳບາກຫລາຍ
15:15 ແລ້ວເຂົາເລີຍໄປຂໍອາໄສຢູ່ນຳຄົນຜູ້ໜຶ່ງຢູ່ເຂດນັ້ນ ຄົນຜູ້ນັ້ນໄດ້ໃຊ້ເຂົາເປັນ
ຄົນລ້ຽງໝູຕາມທົ່ງ
15:16 ແລ້ວເຂົາເລີຍຄຶດຢາກກິນຜັກກິນຫຍ້າຂອງໝູໃຫ້ມັນອີ່ມທ້ອງ ຍ້ອນບໍ່ມີໃຜ
ໃຫ້ອີຫຍັງເຂົາ
15:17 ແລ້ວພໍເຂົາສຳນຶກໂຕກໍເວົ້າວ່າ ‘ຂະໜາດພວກລູກຈ້າງຂອງພໍ່ກູ ເຂົາກໍຍັງມີ
ອາຫານດີເຫລືອກິນ ແຕ່ວ່າກູພວມຊິຂາດເຂົ້າຂາດນ້ຳຕາຍຢູ່ນີ້
15:18 ເອີ້ ກູຊິລຸກຂຶ້ນຄືນເມືອໄປຫາພໍ່ ແລ້ວກູຊິເວົ້າກັບ ລາວ ວ່າ “ພໍ່ເອີຍ ລູກໄດ້
ເຮັດຜິດບາບຕໍ່ພຣະເຈົ້າໃນສະຫວັນກັບຕໍ່ພໍ່ແລ້ວ
15:19 ຜູ້ຂ້າບໍ່ສົມຄວນຊິເປັນລູກຂອງພໍ່ອີກຕໍ່ໄປ ເລີຍຂໍຮັບຜູ້ຂ້າໄວ້ເປັນຄືລູກຈ້າງຜູ້
ໜຶ່ງ”’
15:20 ແລ້ວເຂົາໄດ້ລຸກເມືອໄປຫາພໍ່ ແຕ່ບັດເຂົາຍັງຢູ່ແຕ່ໄກ ພໍ່ເຂົາໄດ້ຫລຽວເຫັນ
ຈັ່ງຄຶດອີຕົນລູກ ເລີຍແລ່ນອອກໄປ  ຈັກກອດຈັກຫອມລູກ
15:21 ແລ້ວລູກນັ້ນໄດ້ເວົ້າກັບພໍ່ວ່າ ‘ອີພໍ່ເອີຍ ລູກໄດ້ເຮັດຜິດບາບຕໍ່ພຣະເຈົ້າໃນ
ສະຫວັນກັບຕໍ່ພໍ່ແລ້ວ ຜູ້ຂ້າບໍ່ສົມຄວນຊິເປັນລູກຂອງພໍ່ອີກຕໍ່ໄປ’
15:22 ແຕ່ພໍ່ເລີຍເວົ້າຂັດຈັງຫວະເຂົາໄວ້ ແລ້ວສັ່ງຄົນໃຊ້ວ່າ ‘ໄປເອົາເສື້ອທີ່ດີທີ່ສຸດ
ມາໃສ່ໃຫ້ລູກເຮົາ ແລ້ວເອົາແຫວນເອົາເກີບມາໃສ່ໃຫ້ນຳ
15:23 ກັບໄປນຳເອົາງົວນ້ອຍໂຕພີໆ ມາຂ້າ ເພື່ອລ້ຽງສະຫລອງສະແດງຄວາມຍິນ-
ດີກັນ
15:24 ຄືລູກຊາຍເຮົານີ້ຄືຕາຍໄປ ແຕ່ບັດນີ້ເຂົາໄດ້ຄືນມາແລ້ວ ເຂົາຫລົງທາງໄປ
ແຕ່ບັດນີ້ໄດ້ຮັບແລ້ວ’ ແລ້ວພວກເຂົາກໍເລີ່ມມ່ວນຊື່ນດີໃຈຢ່າງໃຫຍ່

15:25 ບັດນີ້ ລູກຊາຍກົກຍັງຢູ່ທົ່ງນາ ແຕ່ພໍຫລົບມາໃກ້ຊິຮອດເຮືອນກໍໄດ້ຍິນສຽງ
ດົນຕີ ກັບສຽງຟ້ອນສຽງລໍາ
15:26 ຜູ້ເປັນອ້າຍເລີຍເອີ້ນຄົນໃຊ້ຜູ້ໜຶ່ງມາຖາມເຖິງຄວາມໝາຍຂອງເຫດການ
ແນວນັ້ນ
15:27 ຄົນໃຊ້ບອກວ່າ 'ນ້ອງຊາຍຂອງເຈົ້ານັ້ນໄດ້ກັບມາແລ້ວໆ ພໍ່ເຈົ້າເລີຍຂ້າງົວ
ໂຕພີໆ ລ້ຽງສະຫລອງກັນ ຍ້ອນນ້ອງເຈົ້າໄດ້ກັບມາຢ່າງປອດໄພດີ'
15:28 ແຕ່ພໍບັດຜູ້ເປັນອ້າຍໄດ້ຍິນກໍເກີດບໍ່ພໍໃຈຫລາຍ ເລີຍບໍ່ເຂົ້າເຮືອນຊໍ້າ ຈັ່ງຊັ້ນ
ພໍ່ກໍອອກມາຂໍຮ້ອງກັບລູກຜູ້ເປັນອ້າຍ
15:29 ເຂົາເລີຍບອກພໍ່ວ່າ 'ເບິ່ງແມ້ ຄືດເບິ່ງ ພໍ່ເອີຍ ຂ້ອຍຢູ່ນີ້ເຮັດນໍາພໍ່ຈັກທໍ່ໃດປີ
ມາແລ້ວ ບໍ່ເຄີຍຂືນຄໍາສັ່ງຂອງພໍ່ຈັກເທື່ອ ຂະໜາດສໍ່າແບ້ນ້ອຍຊີ່ໆ ພໍ່ກໍຍັງບໍ່ເຄີຍ
ໃຫ້ເພື່ອຊິລ້ຽງມ່ວນນໍາໝູ່ຈັກເທື່ອເລີຍ
15:30 ແຕ່ພໍບັດລູກຊາຍຜູ້ນັ້ນ ຜູ້ທີ່ໄດ້ຜານເອົາມູນມັງຂອງພໍ່ ໄດ້ກັບມາຈາກການ
ທ່ຽວຊ່ອງຫລິ້ນແມ່ຍິງ ພໍ່ກໍຍັງຂ້າລູກງົວໂຕພີໆ ລ້ຽງສະຫລອງກັນໃຫ້ເຂົາ'
15:31 ພໍ່ເລີຍເວົ້າປອບໃຈວ່າ 'ລູກເອີຍ ເຈົ້າຢູ່ກັບພໍ່ຕະຫລອດມາແຕ່ນ້ອຍຈົນໃຫຍ່
ແລ້ວພໍ່ມີອີຫຍັງໆ ກໍເປັນຂອງເຈົ້າໝົດ
15:32 ແຕ່ວ່າມັນສົມຄວນອີຫລີທີ່ພວກເຮົາຊິສະຫລອງສະແດງຄວາມຍິນດີນໍາກັນ
ຍ້ອນວ່ານ້ອງຂອງເຈົ້ານັ້ນຕາຍຈາກແລ້ວໆ ໄດ້ຄືນມາ ໄດ້ຫລົງທາງຫາຍໄປແລ້ວ
ໆ ໄດ້ຮັບອີກ'"

## ລູກາ ບົດທີ 16

16:1 ແລ້ວ ພຣະເຢຊູ ເວົ້າກັບລູກສິດອີກວ່າ "ມີຄົນຮັ່ງມີຄົນໜຶ່ງທີ່ມີນັກທໍາ ຢູ່ມາມີ
ການຟ້ອງຕໍ່ຄົນຮັ່ງມີບອກວ່າ ນັກທໍາຂອງເຂົາໃຊ້ຊັບຂອງເຂົາຢ່າງຟຸ່ມເຟືອຍ
16:2 ຈັ່ງຊັ້ນ ຄົນຮັ່ງມີເລີຍເອີ້ນນັກທໍານັ້ນມາສອບຖາມວ່າ 'ທີ່ເຮົາໄດ້ຍິນມານັ້ນ
ແມ່ນອີຫລີບໍ້ ໃຫ້ຣາຍງານໂຕດຽວນີ້ ແຕ່ນີ້ຕໍ່ໄປເຈົ້າຊິບໍ່ໄດ້ເປັນນັກທໍາຂອງເຮົາ
ອີກ'
16:3 ແລ້ວນັກທໍາຄຶດໃນໃຈວ່າ 'ຊິເຮັດຈັ່ງໃດດີນໍ ນາຍຊິໄລ່ອອກຈາກງານແລ້ວ ຊິ
ໄປຮັບຈ້າງຂູດດິນຂູດດອນກໍສູ້ບໍ່ໄຫວ ຊິໄປຂໍທານກໍອາຍຄົນ

16:4 ເອີ ຄຶດອອກແລ້ວ ບັດກູຕົກງານແລ້ວ ພວກລູກໜີ້ນາຍກໍຊິໄດ້ຮັບກູໄວ້ໃນ
ເຮືອນຂອງເຂົາ’
16:5 ແລ້ວນັກທຳນັ້ນກໍເອີ້ນລູກໜີ້ຂອງນາຍຄູ່ຄົນມາ ຖາມຄົນແຮກວ່າ ‘ເຈົ້າເປັນໜີ້
ນາຍຂ້ອຍຫລາຍຮາວໃດ’
16:6 ລູກໜີ້ຕອບວ່າ ‘ເປັນໜີ້ນ້ຳມັນໝາກກອກຮ້ອຍປີບ’ ນັກທຳເລີຍບອກວ່າ ‘ເອົາ
ບັນຊີເຈົ້າມາແກ້ເປັນຫ້າສິບປີບໄວໆ’
16:7 ແລ້ວນັກທຳໄປຖາມອີກຜູ້ໜຶ່ງວ່າ ‘ເຈົ້າເດ ເປັນໜີ້ນາຍຂ້ອຍຫລາຍຮາວໃດ’
ລູກໜີ້ກໍຕອບວ່າ ‘ເປັນໜີ້ເຂົ້າວີດຮ້ອຍກະສອບ’ ນັກທຳບອກວ່າ ‘ເອົາບັນຊີເຈົ້າ
ມາແກ້ເປັນແປດສິບ ໂລດ ’
16:8 ແລ້ວຄົນຮັ່ງມີຍອມຮັບວ່ານັກທຳຜູ້ບໍ່ສັດຊື່ນັ້ນ ໄດ້ເຮັດສະຫລາດອີຫລີ ສະ-
ຫລຸບຄວາມແລ້ວຄົນຝ່າຍໂລກນີ້ ສະຫລາດກວ່າລູກຂອງພຣະເຈົ້າດ້ວຍຊ້ຳ
16:9 ບັດນີ້ ເຮົາບອກເຈົ້າໄວ້ ວ່າ ໃຫ້ສ້າງເພື່ອນໃຫ້ໂຕເອງຫລາຍຄົນດ້ວຍເງິນໃນ
ທາງອະທຳ  ແລ້ວບັດຊີວິດເຈົ້າໝົດໄປ ເຈົ້າຊິຖືກຮັບເອົາໄປໄວ້ຢູ່ໃນເຮືອນອຳ-
ມະຕະ
16:10 ຄື ຜູ້ທີ່ສັດຊື່ໃນຂອງນ້ອຍໆ ນ້ອຍໆ ຜູ້ນັ້ນກໍຊິສັດຊື່ໃນສິ່ງຍິ່ງໃຫຍ່ສຳຄັນນຳ
ແຕ່ວ່າຜູ້ໃດບໍ່ສັດຊື່ໃນຂອງນ້ອຍໆ ນ້ອຍໆ ຜູ້ນັ້ນກໍຊິບໍ່ສັດຊື່ໃນສິ່ງໃຫຍ່ສຳຄັນຄື
ກັນ
16:11 ຈັ່ງຊັ່ນ ຄັ່ນພວກເຈົ້າບໍ່ສັດຊື່ໃນເລື່ອງຊັບສົມບັດທາງໂລກອະທຳນີ້ ແລ້ວ
ແມ່ນໃຜຊິໄວ້ໃຈມອບຊັບສົມບັດອັນແທ້ຈິງໄວ້ໃຫ້ເຈົ້າ
16:12 ຄືຄັ່ນເຈົ້າບໍ່ເຄີຍສັດຊື່ໃນຂອງຄົນອື່ນ ໃຜຊິກ້າມອບຂອງມີຄ່າໃຫ້ເປັນຂອງ
ເຈົ້າໄດ້
16:13 ບໍ່ມີໃຜສາມາດຮັບໃຊ້ນາຍສອງຄົນພ້ອມກັນໄດ້ ຄັ່ນຈັ່ງຊັ່ນກໍຊິຊັງນາຍຜູ້ໜຶ່ງ
ແລ້ວຮັກອີກຜູ້ໜຶ່ງ ຫລືຊິສັດຊື່ຕໍ່ນາຍຜູ້ໜຶ່ງ ແລ້ວຊິດູຖູກອີກຜູ້ໜຶ່ງ ຄືວ່າເຈົ້າຊິຮັບ-
ໃຊ້ພຣະເຈົ້າກັບຊັບສິນເງິນທອງພ້ອມກັນກໍເປັນໄປບໍ່ໄດ້”
16:14 ແລ້ວຝ່າຍພວກ ຟາຣີຊາຍ  ພໍໄດ້ຍິນແນວນີ້ ພວກເຂົາກໍພາກັນລົບຫລູ່
ເຍາະເຍີ້ຍ ພຣະເຢຊູ ຍ້ອນວ່າເຂົາຮັກເງິນທອງຫລາຍ

16:15 ພຣະເຢຊູ ເລີຍບອກເຂົາວ່າ "ພວກເຈົ້າມັກວາງທ່າທາງວ່າເປັນຄົນຖືກຄົນ
ແມ່ນຕໍ່ໜ້າຄົນທັງຫລາຍ ແຕ່ພຣະເຈົ້າຮູ້ຈັກໃຈຂອງພວກເຈົ້າຢູ່ແລ້ວໆ ແນວທີ່
ຄົນນັບຖືຢ່າງສູງນັ້ນ ເປັນຕາໜ່າຍໃນສາຍຕາຂອງພຣະເຈົ້າ
16:16 ຄືສະໄໝກົດບັນຍັດກັບຜູ້ເປັນປາກເປັນສຽງໄດ້ເປັນໃຫຍ່ຢູ່ຈົນຮອດ ໂຢຮັນ
ຜູ້ໃຫ້ຮັບຈຸ່ມນໍ້ານັ້ນ ແລ້ວຕັ້ງແຕ່ນັ້ນມາເປັນສະໄໝປ່າວປະກາດຂ່າວດີເລື່ອງລາ-
ຊະອານາຈັກຂອງພຣະເຈົ້າ ແລ້ວຄູ່ຄົນພະຍາຍາມຊິແຍ່ງຊີງກັນເຂົ້າໄປໃຫ້ໄດ້
16:17 ແຕ່ວ່າ ຟ້າກັບດິນຊິຜ່ານພົ້ນໄປກ່ອນ ງ່າຍກວ່າຂໍ້ນ້ອຍໆ ນ້ອຍໆ ໃນກົດບັນ-
ຍັດນັ້ນຊິລ່ວງຫລຸດໄປ
16:18 ຄືຜູ້ໃດທີ່ປະເມຍຂອງໂຕ ແລ້ວເອົາເມຍໃໝ່ກໍຜິດປະເວນີແລ້ວໆ ຜູ້ໃດໄປ
ເອົາເມຍຜູ້ຖືກປະນັ້ນມາເປັນເມຍກໍຜິດປະເວນີຄືກັນ"
16:19 "ແລ້ວ ມີຄົນຮັ່ງມີຜູ້ໜຶ່ງໃສ່ເສື້ອກະສັດສີມ່ວງຢ່າງດີ ຢູ່ກິນຢ່າງຟຸ່ມເຟືອຍຢູ່ຄູ່
ມື້
16:20 ກັບມີຄົນຂໍທານຄົນໜຶ່ງຊື່ ລາຊະໂລ ມີບາດແຜເຕັມໂຕ ຖືກຄົນຫາມມາປະ
ໄວ້ຢູ່ໜ້າປະຕູຮົ້ວຄົນຮັ່ງມີຜູ້ນັ້ນ
16:21 ເຂົາຄິດຢາກກິນເສດອາຫານທີ່ຕົກຈາກໂຕະຂອງຄົນຮັ່ງມີຜູ້ນັ້ນ ນອກຈາກ-
ນັ້ນພວກໝາກໍມາເລຍບາດແຜເຂົາ
16:22 ຢູ່ມາ ລາຊະໂລ ຄົນຂໍທານນັ້ນໄດ້ຕາຍ ແລ້ວເທວະທູດໄດ້ຮັບເອົາວິນຍານ
ເຂົາໄປໄວ້ໃນອ້ອມອົກຂອງ ອັບຣາຮາມ ຢູ່ເທິງສະຫວັນ ຄົນຮັ່ງມີກໍຕາຍຄືກັນ
ແລ້ວເອົາໄປຝັງໄວ້
16:23 ບັດນີ້ຄົນຮັ່ງມີນັ້ນພວມຖືກທໍລະມານຢູ່ໃນນະລົກ ໄດ້ຫລຽວຂຶ້ນເຫັນ ອັບຣາ-
ຮາມ ຢູ່ແຕ່ໄກໆ ກັບເຫັນ ລາຊະໂລ ຢູ່ໃນອ້ອມອົກຂອງ ລາວ
16:24 ແລ້ວຄົນຮັ່ງມີເລີຍຮ້ອງໃສ່ ອັບຣາຮາມ ວ່າ 'ພໍ່ເອີຍ ອີຕົນຜູ້ຂ້າແໜ່ທ້ອນ ຂໍ
ໃຊ້ ລາຊະໂລ ເອົານິ້ວມືຈຸ່ມນໍ້າມາແຕະລີ້ນຜູ້ຂ້າໃຫ້ເຢັນແໜ່ ຜູ້ຂ້າພວມຖືກທໍລະ-
ມານ ອອກຮ້ອນອອກຮົນຢູ່ໃນແປວໄຟນີ້'

16:25 ແຕ່ ອັບຣາຮາມ ບອກວ່າ 'ລູກເອີຍ ເຈົ້າບໍ່ຄຶດເຫັນບໍ ຕອນເຈົ້າຍັງມີຊີວິດຢູ່
ເຈົ້າໄດ້ຮັບແຕ່ແນວດີໆ ແລ້ວ ລາຊະໂລ ນີ້ບໍ່ເຄີຍໄດ້ດີຫຍັງເລີຍແຕ່ວ່າດຽວນີ້ເຂົາ
ໄດ້ຮັບຄວາມອົບອຸ່ນປອບໃຈ ແລ້ວເຈົ້າມີແຕ່ຄວາມທຸກທໍລະມານ
16:26 ນອກຈາກນັ້ນ ມີເຫວໃຫຍ່ກວ້າງ ຂວາງໄວ້ຢູ່ລະຫວ່າງເຮົາທັງສອງ ເພື່ອວ່າ
ໃຜຄຶດຢາກຂ້າມໄປຫາກັນມັນກໍເປັນໄປບໍ່ໄດ້'
16:27 ຄົນຮັ່ງມີກໍເລີຍຂໍອີກວ່າ 'ບໍ່ຊັ້ນຊ່ອຍໃຊ້ ລາຊະໂລ ໄປບ້ານພໍ່ຜູ້ຂ້າແໜ່
16:28 ຜູ້ຂ້າມີນ້ອງຊາຍຫ້າຄົນ ຜູ້ຂ້າບໍ່ຢາກໃຫ້ເຂົາຕົກນະລົກທົນທຸກທໍລະມານນໍາ
ຜູ້ຂ້າຢູ່ນີ້'
16:29 ແຕ່ ອັບຣາຮາມ ບອກວ່າ 'ເຂົາມີ ພຣະທໍາ ຂອງ ໂມເຊ ກັບຂອງພວກຜູ້ເປັນ-
ປາກເປັນສຽງ ໃຫ້ພວກເຂົາຟັງນັ້ນເອີາ'
16:30 ແລ້ວ ຄົນຮັ່ງມີເລີຍວ່າ 'ມັນຍັງບໍ່ໄດ້ ພໍ່ເອີຍ ແຕ່ຄັນມີຄົນເປັນຂຶ້ນມາຈາກ
ຕາຍໄປບອກເຂົາ ຄືຊິກັບໃຈ ໂລດ '
16:31 ແຕ່ ອັບຣາຮາມ ບອກຄົນຮັ່ງມີວ່າ 'ຄັນພວກເຂົາບໍ່ຟັງ ພຣະທໍາ ຂອງ ໂມເຊ
ກັບຂອງພວກຜູ້ເປັນປາກເປັນສຽງນັ້ນ ແມ່ນແຕ່ຊິມີຄົນເປັນຂຶ້ນມາຈາກຕາຍໄປ
ບອກ ເຂົາກໍຍັງຊິບໍ່ຍອມຟັງຄືກັນ'"

## ລູກາ ບົດທີ 17

17:1 ແລ້ວ ພຣະເຢຊູ ບອກລູກສິດຕໍ່ອີກ ວ່າ "ແນວທີ່ໃຫ້ສະດຸດນັ້ນມັນກໍຕ້ອງມີມາ
ແນ່ນອນ ແຕ່ລະວັງພິນາດເດີ້ ຜູ້ທີ່ເປັນເຫດໃຫ້ລູກຂອງພຣະເຈົ້າສະດຸດ
17:2 ຜູ້ນັ້ນສົມຄວນຊິຖືກຫີນໂມ້ຜູກຫ້ອຍໃສ່ຄໍແລ້ວໂຍນລົງທະເລ ດີກວ່າປ່ອຍ
ເຂົາໄວ້ເປັນເຫດໃຫ້ຜູ້ນ້ອຍ ນ້ອຍໃນພຣະເຈົ້າສະດຸດໄປ
17:3 ລະວັງກັນໄວ້ໃຫ້ດີເດີ້ ຄັນພີ່ນ້ອງຜູ້ໃດເຮັດຄວາມຜິດບາບໃສ່ເຈົ້າ ກໍໃຫ້ຕັກ
ເຕືອນບອກເຂົາໄວ້ ແລ້ວຄັນແມ່ນເຂົາສໍານຶກກັບໃຈກໍອະໄພໃຫ້ເຂົາ
17:4 ແລ້ວຄັນແມ່ນເຂົາຊິເຮັດຜິດໃສ່ເຈົ້າມື້ລະເຈັດເທື່ອ ແລ້ວມາຂໍອະໄພຍອມຮັບ
ຜິດຄູ່ເທື່ອກໍອະໄພໃຫ້ເຂົາ"
17:5 ແລ້ວພວກທູດພິເສດທີ່ ພຣະເຢຊູ ຕັ້ງໄວ້ນັ້ນໄດ້ເວົ້ານໍາເພິ່ນວ່າ "ຊ່ອຍເພີ່ມ
ຄວາມເຊື່ອໃຫ້ພວກຜູ້ຂ້າແໜ່"

17:6 ພຣະເຢຊູ ເລີຍເວົ້າວ່າ “ຄັນແມ່ນພວກເຈົ້າມີຄວາມເຊື່ອນ້ອຍ ສໍ່າເມັດຜັກ
ຜັກກາດ ກໍຊິສາມາດບອກຕົ້ນໄມ້ນີ້ໃຫ້ຖອນອອກຍ້າຍໄປຕັ້ງຢູ່ກາງທະເລ ແລ້ວ
ມັນກໍຊິຟັງຄວາມເຈົ້າ
17:7 ແລ້ວແມ່ນໃຜໃນພວກເຈົ້າເຄີຍມີຂ້າທາດຮັບໃຊ້ອອກໄປໄຖນາ ຫລືລ້ຽງແກະ
ແລ້ວພໍເຂົາກັບມາຍາມມື້ແລງ ເຄີຍເຊີນໃຫ້ເຂົານັ່ງລົງກິນເຂົ້າ ໂລດ ມີບໍ້
17:8 ຕາມທໍາມະດາເຈົ້າຂອງເຮືອນຊິສັ່ງຄົນໃຊ້ໃຫ້ປ່ຽນເສື້ອຜ້າກຽມໂຕເຮັດແນວ
ກິນໃຫ້ ລາວ ກິນອີ່ມຊະກ່ອນ ແລ້ວຈັ່ງຄ່ອຍໃຫ້ເຂົາກິນນໍາຫລັງແມ່ນບໍ່
17:9 ເຈົ້າຂອງເຮືອນຊິຂອບໃຈຍົກຍ້ອງຄົນໃຊ້ຂອງ ລາວ ບໍ້ ຍ້ອນຄົນໃຊ້ໄດ້ເຮັດ
ຕາມໜ້າທີ່ຂອງເຂົາ ເຮົາວ່າ ລາວ ບໍ່ຂອບໃຈດອກ
17:10 ຈັ່ງຊັ້ນພວກເຈົ້າກໍຄືກັນ ບັດໄດ້ປະຕິບັດຕາມຄໍາສັ່ງໝົດຄູ່ແນວ ພວກເຈົ້າ
ຕ້ອງຍອມຮັບວ່າໂຕເອງບໍ່ສົມຄວນຊິໄດ້ຮັບກຽດພິເສດອີຫຍັງ ຍ້ອນພຽງແຕ່ເຮັດ
ຕາມໜ້າທີ່ຊື່ໆ”
17:11 ແລ້ວມັນເປັນໄປທີ່ວ່າ ຕອນ ພຣະເຢຊູ ພວມໄປ ກຸງເຢຣູຊາເລັມ ນັ້ນ ເພິ່ນໄດ້
ຜ່ານລະຫວ່າງເຂດ ຊາມາເຣຍ ກັບເຂດ ກາລີເລ
17:12 ບັດນີ້ ເພິ່ນໄດ້ເຂົ້າໄປໃນໝູ່ບ້ານໜຶ່ງ ແລ້ວໃນໝູ່ບ້ານນັ້ນມີຄົນເປັນຂີ້ທູດສິບ
ຄົນ ໄດ້ເຂົ້າມາຫາເພິ່ນຢືນຢູ່ແຕ່ໄກ
17:13 ແລ້ວພວກເຂົາພາກັນເອີ້ນໃສ່ເພິ່ນວ່າ “ ພຣະເຢຊູ ນາຍຜູ້ຂ້າເອີຍ ຂໍເມດຕາ
ຊ່ອຍພວກຜູ້ຂ້າແໜ່ທ້ອນ”
17:14 ພໍ ພຣະເຢຊູ ເຫັນເລີຍບອກເຂົາວ່າ “ໃຫ້ໄປຫາພວກປະໂລຫິດເດີ້ ແລ້ວໃຫ້
ເຂົາກວດເບິ່ງພວກໂຕເຈົ້າ” ແລ້ວຕອນພວກເຂົາພວມໄປຢູ່ນັ້ນ ເຂົາໄດ້ເຊົາເປັນ
ຂີ້ທູດໝົດຄູ່ຄົນ
17:15 ແຕ່ວ່າໃນສິບຄົນນີ້ມີແຄ່ຜູ້ດຽວບັດພໍຮູ້ເນືອວ່າໂຕເຊົາເປັນຂີ້ທູດ ເຂົາເລີຍຫັນ
ກັບມາຫາ ພຣະເຢຊູ ແລ້ວຍົກຍ້ອງສັນລະເສີນພຣະເຈົ້າຢ່າງໃຫຍ່ດ້ວຍສຽງດັ່ງ
17:16 ແລ້ວກົ້ມກາບຕີນຂອບຄຸນ ພຣະເຢຊູ ແລ້ວຜູ້ນີ້ເປັນຄົນ ຊາມາເຣຍ
17:17 ພຣະເຢຊູ ເລີຍບອກເຂົາວ່າ “ເຮົາໄດ້ປົວສິບຄົນບໍ່ແມ່ນບໍ້ ແລ້ວເກົ້າຄົນນັ້ນຢູ່
ໃສ

17:18 ຄືບໍ່ມີຜູ້ອື່ນບໍ້ ທີ່ຫັນຫລົບມາສັນລະເສີນພຣະເຈົ້າ ນອກຈາກຄົນຕ່າງຊາດຜູ້
ດຽວນີ້”
17:19 ແລ້ວ ພຣະເຢຊູ ບອກຄົນ ຊາມາເຣຍ ຜູ້ນັ້ນວ່າ “ໃຫ້ລຸກໄປນຳທາງຂອງເຈົ້າ
ຊະ ທີ່ເຈົ້າເຊົາເປັນດີແນວນີ້ກໍຍ້ອນເຈົ້າມີຄວາມເຊື່ອໃນເຮົາ”
17:20 ແລ້ວຕອນນັ້ນ ພຣະເຢຊູ ໄດ້ຖືກພວກຄະນະ ຟາຣີຊາຍ ແກ້ງຖາມເຖິງລາ-
ຊະອານາຈັກຂອງພຣະເຈົ້າ ວ່າຊິມາຕັ້ງມື້ໃດ ພຣະເຢຊູ ເລີຍຕອບເຂົາວ່າ “ລາ-
ຊະອານາຈັກຂອງພຣະເຈົ້ານັ້ນ ບໍ່ໄດ້ມາດ້ວຍການສັງເກດດ້ວຍຕາດອກ
17:21 ກັບບໍ່ມີໃຜຊິເວົ້າກັນວ່າ ‘ເບິ່ງຢູ່ນີ້ ເບິ່ງຢູ່ຫັ້ນ ຍ້ອນວ່າ ລາຊະອານາຈັກຂອງ-
ພຣະເຈົ້າໝ້ອງເພິ່ນເປັນໃຫຍ່ນັ້ນ ກໍຢູ່ໃນຊີວິດຈິດໃຈຂອງເຈົ້າ’
17:22 ແລ້ວ ພຣະເຢຊູ ບອກລູກສິດຂອງເພິ່ນວ່າ ‘ຊິມີຍາມມາຮອດທີ່ພວກເຈົ້າຊິ
ຢາກເຫັນມື້ຂອງເຮົາຜູ້ເປັນບຸດມະນຸດມາຮອດ ແຕ່ຊິບໍ່ໄດ້ເຫັນ
17:23 ແລ້ວຊິມີຄົນມາເວົ້າວ່າ “ເພິ່ນມາແລ້ວ ຢູ່ພູ້ນ ຢູ່ພີ້” ແຕ່ວ່າຢ່າຫລົງຕິດຕາມ
ພວກເຂົາເດີ້
17:24 ຍ້ອນວ່າບັດຮອດຍາມເຮົາຜູ້ເປັນບຸດມະນຸດຊິມານັ້ນ ຊິຮູ້ຊິເຫັນທົ່ວກັນໝົດ
ຄືຟ້າເຫລື້ອມແຈ້ງໄປໝົດທົ່ວທ້ອງຟ້າ
17:25 ແຕ່ກ່ອນຊິຮອດຍາມນັ້ນ ເຮົາຊິຕ້ອງທົນທຸກທໍລະມານຫລາຍແນວ ແລ້ວຖືກ
ຄົນສະໄໝນີ້ປະຕິເສດບໍ່ຍອມຮັບ
17:26 ແລ້ວບັດຮອດຍາມເຮົາຊິມານັ້ນ ມັນຊິເປັນໄປຄືກັນກັບສະໄໝ ໂນເອ ນັ້ນ
17:27 ຄືຕອນນັ້ນພວກຄົນກໍມົວແຕ່ກິນແຕ່ເມົາ ຜູກຂໍ້ຕໍ່ແຂນເປັນຜົວເມຍກັນ ຈົນ
ຮອດມື້ ໂນເອ ໄດ້ເຂົ້າໄປຢູ່ໃນເຮືອໃຫຍ່ ແລ້ວນ້ຳທ່ວມໄດ້ມາທຳລາຍຄົນພວກ
ນັ້ນໃຫ້ພິນາດໝົດ
17:28 ແລ້ວໃນສະໄໝຂອງເຖົ້າ ໂລດ ກໍຄືກັນ ພວກຄົນມົວແຕ່ກິນແຕ່ເມົາ ຄ້າຂາຍ
ຫາຢູ່ຫາກິນ ເຮັດໄຮ່ໃສ່ນາ ປຸກເລົ້າປຸກເຮືອນອີກກະທືກ
17:29 ແຕ່ວ່າມື້ທີ່ພຣະເຈົ້ານຳເຖົ້າ ໂລດ ອອກຈາກເມືອງ ໂສໂດມ ນັ້ນ ໄຟກຳມະ-
ຖັນ *ຂອງພຣະເຈົ້າ* ນັ້ນ ໄດ້ຕົກລົງມາແຕ່ເທິງທ້ອງຟ້າ ເຜົາໄຫມ້ເມືອງ ໂສໂດມ ຈົນ-
ຫາຍວາຍວອດໝົດ

17:30 ແລ້ວໃນມື້ທີ່ເຮົາຜູ້ເປັນບຸດມະນຸດຊິມາເປີດເຜີຍ ມັນກໍຊິເປັນຄືກັນນີ້ເນາະ
17:31 ໃນມື້ນັ້ນ ຜູ້ທີ່ຢູ່ເທິງຫລັງຄາ ແລ້ວມີຂອງຢູ່ໃນເຮືອນ ກໍຢ່າໃຫ້ລົງໄປເກັບເອົາ
ໄປນຳເດີ້ ກັບຜູ້ທີ່ຢູ່ທົ່ງນາ ຢ່າສູ່ຫລົບຄືນເມືອບ້ານເດີ້
17:32 ໃຫ້ຄຶດເບິ່ງ ເມຍຂອງ ໂລດ ນັ້ນ
17:33 ຄືຜູ້ໃດກໍຕາມທີ່ພະຍາຍາມເອົາໂຕລອດ ຜູ້ນັ້ນຊິບໍ່ໄດ້ລອດ ແຕ່ຜູ້ທີ່ຍອມສະ-
ລະຊີວິດຂອງໂຕ ຜູ້ນັ້ນກໍຊິໄດ້ຊີວິດລອດ
17:34 ແລ້ວໃນຄືນມື້ທີ່ເຮົາຊິມານັ້ນ ສອງຄົນທີ່ນອນຢູ່ຕຽງດຽວກັນ ຊິຖືກເອົາໄປຜູ້
ໜຶ່ງ ແລ້ວລະໄວ້ອີກຜູ້ໜຶ່ງ
17:35 ແລ້ວແມ່ຍິງທີ່ໂມ້ແປ້ງຢູ່ນຳກັນ ຊິຖືກເອົາໄປຜູ້ໜຶ່ງ ແລ້ວລະໄວ້ອີກຜູ້ໜຶ່ງ'
17:36 ກັບສອງຄົນທີ່ເຮັດວຽກງານນຳກັນຢູ່ທົ່ງນາ ຊິຖືກເອົາໄປຜູ້ໜຶ່ງ ແລ້ວລະໄວ້
ອີກຜູ້ໜຶ່ງ"
17:37 ແລ້ວ ພວກຄົນຢູ່ນັ້ນຖາມເພິ່ນວ່າ "ຊິເກີດຂຶ້ນຢູ່ໃສ ອາຈານເອີຍ" ພຣະເຢຊູ
ຕອບວ່າ "ມີຊາກສົບຢູ່ໃສ ກໍຊິເຫັນໝູ່ແຮ້ງຕອມຢູ່ນັ້ນ"

## ລູກາ ບົດທີ 18

18:1 ແລ້ວ ພຣະເຢຊູ ໄດ້ເວົ້າເລື່ອງປຽບທຽບໃຫ້ເຂົາຮູ້ກັນວ່າ ຄວນຊິອະທິຖານເວົ້າ
ນຳພຣະເຈົ້າຢູ່ຄູ່ຍາມ ແທນທີ່ຊິເກີດທໍ້ໃຈ
18:2 ໄດ້ເວົ້າວ່າ "ມີຜູ້ພິພາກສາໃນເມືອງໜຶ່ງ ຜູ້ນີ້ບໍ່ໄດ້ຢ້ານໃຜເລີຍ ຂະໜາດພຣະ-
ເຈົ້າກໍບໍ່ໄດ້ຢ້ານ
18:3 ບັດນີ້ ໃນເມືອງນັ້ນ ມີແມ້ໝ້າຍຄົນໜຶ່ງໄດ້ໄປຫາຜູ້ພິພາກສາຜູ້ນີ້ ອ້ອນວອນ
ວ່າ 'ຂໍອອກຄຳຕັດສິນໃນທາງເປັນທຳໃຫ້ຜູ້ຂ້າ ເພື່ອໃຫ້ຫວິດຄຳກ່າວຫາຂອງຄູ່
ຄະດີແໜ່ທ້ອນ'
18:4 ແຕ່ເລີ່ມແຮກຜູ້ພິພາກສານັ້ນກໍບໍ່ສົນໃຈ ແຕ່ຢູ່ມາກໍຄຶດໃນໃຈວ່າ 'ແມ່ນແຕ່ກູບໍ່
ຢ້ານພຣະເຈົ້າ ກັບບໍ່ເຄີຍເອົາໃຈຜູ້ໃດເລີຍ
18:5 ແຕ່ຍ້ອນແມ້ໝ້າຍຄົນນີ້ຫຽວມາຂໍຮ້ອງຈົນລຳຄານຫູ ກູຕ້ອງຖອນຄະດີຊ່ອຍ
ເຂົາ ເພື່ອເຂົາຊິບໍ່ມາລົບກວນກູໃຫ້ເມື່ອຍໃຈ'"

18:6 ແລ້ວ ພຣະເຢຊູ ບອກວ່າ “ໃຫ້ຄຶດເບິ່ງ ຄວາມເວົ້າຂອງຜູ້ພິພາກສາໃຈບໍ່ເປັນ-
ທຳນັ້ນ
18:7 ແລ້ວຍິ່ງກວ່ານັ້ນອີກ ພຣະເຈົ້າກໍຊິໃຫ້ຄວາມເປັນທຳໃຫ້ກັບຄົນຂອງເພິ່ນ ຊຶ່ງ
ວອນຂໍຕໍ່ເພິ່ນ ທັງກາງເວັນກາງຄືນ ແມ່ນແຕ່ເພິ່ນອົດທົນ
18:8 ເຮົາຊິບອກພວກເຈົ້າເດີ້ ບັດເພິ່ນມາເພິ່ນກໍຊິຈັດການໃນທາງເປັນທຳໃຫ້ໂດຍ
ໄວ ແຕ່ວ່າບັດເຮົາຜູ້ເປັນບຸດມະນຸດກັບມາ ເຮົາຊິພໍ້ຄວາມເຊື່ອເທິງແຜ່ນດິນໂລກ
ອີຫລີບໍ້”
18:9 ແລ້ວສຳລັບຄົນທີ່ເຊື່ອໝັ້ນໃນໂຕເອງວ່າເປັນຄົນດີພ້ອມ ແລ້ວດູຖູກຄົນອື່ນ
ພຣະເຢຊູ ໄດ້ເວົ້າຄຳປຽບທຽບນີ້ ວ່າ
18:10 “ມີສອງຄົນໄດ້ຂຶ້ນໄປອະທິຖານຕໍ່ພຣະເຈົ້າຢູ່ໃນພຣະວິຫານ ຜູ້ໜຶ່ງເປັນນັກ
ສາສະໜາຄະນະ ຟາຣີຊາຍ ອີກຜູ້ໜຶ່ງເປັນຄົນເກັບພາສີ
18:11 ຟາຣີຊາຍ ນັ້ນກໍຢືນຂຶ້ນ ແລ້ວອະທິຖານເຖິງໂຕເອງວ່າ ‘ສາທຸການພຣະເຈົ້າ
ເອີຍ ຜູ້ຂ້າຂໍສັນລະເສີນຂອບໃຈພຣະເຈົ້າທີ່ຜູ້ຂ້າບໍ່ຄືຄົນອື່ນໆ ທີ່ເປັນຄົນຂີ້ໂລບ
ຄົນບໍ່ສັດຊື່ ຄົນຜິດປະເວນີ ຄືຄົນເກັບພາສີຜູ້ນີ້ເນາະ
18:12 ຜູ້ຂ້າໄດ້ຖືສິນອົດອາຫານອາທິດລະສອງເທື່ອ ກັບໄດ້ຖວາຍສິບລຸດຈາກຄູ່
ແນວທີ່ຜູ້ຂ້າມີຢູ່’
18:13 ແຕ່ຄົນເກັບພາສີນັ້ນຢືນຢູ່ແຕ່ໄກ ບໍ່ກ້າເງີຍໜ້າຂຶ້ນທາງສະຫວັນ ເວົ້າວ່າ ‘ໂອ໋
ພຣະເຈົ້າ ຂໍເມດຕາຜູ້ຂ້າແໜ່ທ້ອນ ຜູ້ເປັນຄົນຂີ້ບາບອີຫລີ’”
18:14 ແລ້ວ ພຣະເຢຊູ ວ່າ “ເຮົາຊິບອກພວກເຈົ້າ ໃນສອງຄົນນີ້ ຄົນເກັບພາສີນັ້ນ
ໄດ້ເມືອເຮືອນເປັນຄົນຊອບທຳແລ້ວ ຕ່າງຈາກນັກສາສະໜາຄະນະ ຟາຣີຊາຍ ຜູ້
ນັ້ນ ຄື ຜູ້ທີ່ຍົກໂຕໃຫ້ກຽດໂຕເອງຊິຖືກຖ່ອມລົງ ແຕ່ຜູ້ທີ່ຖ່ອມໂຕເອງກໍຊິຖືກຍົກ
ຂຶ້ນໃຫ້ມີກຽດ”
18:15 ບັດນີ້ ໄດ້ມີຫລາຍຄົນອຸ້ມລູກນ້ອຍມາຫາ ພຣະເຢຊູ ຢາກໃຫ້ເພິ່ນວາງມື
ອວຍພອນ ແຕ່ພໍພວກລູກສິດເຫັນເຂົາກໍສັ່ງຫ້າມໄວ້

18:16 ແຕ່ ພຣະເຢຊູ ເອີ້ນລູກສິດມາບອກວ່າ “ໃຫ້ເດັກນ້ອຍເຂົ້າມາເຮົາ ໂລດ ຢ່າ
ຫ້າມເຂົາເລີຍ ຄືລາຊະອານາຈັກຂອງພຣະເຈົ້າເປັນຂອງຜູ້ມີໃຈຖ່ອມແບບນີ້
ແຫລະ
18:17 ເຮົາຊິເວົ້າໃຫ້ຟັງຕາມຊື່ນີ້ເນາະ ຜູ້ໃດບໍ່ຍອມຖ່ອມໂຕຮັບລາຊະອານາຈັກ-
ຂອງພຣະເຈົ້າ ຄືກັນກັບເດັກນ້ອຍນີ້ ຜູ້ນັ້ນບໍ່ມີທາງເຂົ້າໄດ້ເລີຍ”
18:18 ແລ້ວມີຄົນຊັ້ນຫົວໜ້າຜູ້ໜຶ່ງຖາມ ພຣະເຢຊູ ວ່າ “ອາຈານຜູ້ປະເສີດເອີຍ ເຮັດ
ຈັ່ງໃດຜູ້ຂ້າຈັ່ງຊິໄດ້ຊີວິດອັນຕະຫລອດໄປເປັນນິດ”
18:19 ພຣະເຢຊູ ເລີຍເວົ້າກັບເຂົາວ່າ “ເປັນຫຍັງຄືກັນກັບເອີ້ນເຮົາວ່າປະເສີດ ບໍ່ມີ
ໃຜປະເສີດດອກ ມີແຕ່ພຣະເຈົ້າຜູ້ດຽວນັ້ນເນາະເປັນຜູ້ປະເສີດ
18:20 ເຈົ້າຮູ້ຈັກຂໍ້ກົດບັນຍັດແມ່ນບໍ່ ທີ່ວ່າ ຢ່າຫລິ້ນຊູ້ ຢ່າຂ້າຄົນ ຢ່າລັກຂອງເພິ່ນ
ຢ່າເປັນພະຍານບໍ່ຈິງ ກັບ ໃຫ້ກຽດພໍ່ແມ່ຂອງໂຕ”
18:21 ຫົວໜ້ານັ້ນຕອບວ່າ “ຜູ້ຂ້າໄດ້ຮັກສາຂໍ້ພວກນີ້ໄວ້ຕັ້ງແຕ່ນ້ອຍມາ”
18:22 ພໍ ພຣະເຢຊູ ໄດ້ຍິນແນວນີ້ກໍເລີຍບອກເຂົາວ່າ “ເຈົ້າກໍຍັງຂາດຢູ່ແນວໜຶ່ງ ຄື
ໃຫ້ເຈົ້າໄປຂາຍຊັບສິນຂອງເຈົ້າທັງໝົດ ແລ້ວເອົາເງິນໄປທານພວກຄົນຈົນຊະ
ເຖິງຊິໄດ້ຊັບສິນໃນສະຫວັນ  ແລ້ວຈັ່ງຕາມເຮົາມາເດີ້”
18:23 ພໍໄດ້ຍິນ ພຣະເຢຊູ ເວົ້າຈັ່ງຊັ້ນ ລາວກໍໜັກໃຈຂະໜາດຍ້ອນ ລາວ ຮັ່ງມີ
ຫລາຍ
18:24 ພໍ ພຣະເຢຊູ ເຫັນສີໜ້າ ລາວ ວ່າເສົ້າຫລາຍ ເລີຍເວົ້າວ່າ “ມັນຊິຍາກສໍ່າໃດ
ທີ່ຄົນຮັ່ງມີຊິເຂົ້າໃນລາຊະອານາຈັກຂອງພຣະເຈົ້າໄດ້
18:25 ຄື ການທີ່ອູດຊິລອດຮູເຂັມກໍຍັງຊິງ່າຍກວ່າຄົນຮັ່ງມີຊິເຂົ້າລາຊະອານາຈັກ-
ຂອງພຣະເຈົ້າໄດ້”
18:26 ພໍຄົນໄດ້ຍິນ ພຣະເຢຊູ ເວົ້າແນວນັ້ນ ກໍຖາມເພິ່ນວ່າ “ແລ້ວແມ່ນໃຜຊິລອດ
ໄດ້ຊັ້ນ?”
18:27 ພຣະເຢຊູ ເວົ້າວ່າ “ແນວທີ່ຄົນເຮັດບໍ່ໄດ້ ພຣະເຈົ້າກໍຍັງເຮັດໃຫ້ໄດ້”
18:28 ແລ້ວ ເປໂຕ ເລີຍເວົ້າຂຶ້ນວ່າ “ນີ້ເນາະ ພວກຂ້ອຍໄດ້ປະເຮືອນປະຊານຕິດ
ຕາມເຈົ້າມາແລ້ວ”

18:29 ພຣະເຢຊູ ເລີຍວ່າ “ເຮົາຊິເວົ້າໃຫ້ຟັງຕາມຊື່ນີ້ເນາະ ມັນບໍ່ມີໃຜທີ່ເຄີຍສະລະ
ເຮືອນຊານບ້ານຊ່ອງ ກັບສະລະລູກເມຍພໍ່ແມ່ພີ່ນ້ອງ ແລ້ວຕາມເຮົາມາຍ້ອນເຫັນ
ແກ່ລາຊະອານາຈັກຂອງພຣະເຈົ້າ
18:30 ທີ່ຊິບໍ່ໄດ້ຮັບການທົດແທນເປັນຫລາຍເທົ່າບໍ້ໃນປະຈຸບັນນີ້ ແລ້ວໃນອະນາ-
ຄົດທາງໜ້າກໍຊິໄດ້ຊີວິດອັນຕະຫລອດໄປເປັນນິດ”
18:31 ເວົ້າແລ້ວ ພຣະເຢຊູ ກໍເອີ້ນລູກສິດສິບສອງຄົນມາຮ່ວມກັນ ແລ້ວເວົ້າກັບເຂົາ
ວ່າ “ບັດນີ້ພວກເຮົາຊິພາກັນຂຶ້ນໄປເມືອງ ເຢຣູຊາເລັມ ເດີ້ແລ້ວມັນຊິເປັນໄປຕາມ
ໝົດຄູ່ແນວທີ່ພວກຜູ້ເປັນປາກເປັນສຽງໄດ້ຂຽນໄວ້ເວົ້າເຖິງເຮົາຜູ້ເປັນບຸດມະນຸດ
18:32 ຄືເຮົາ ຜູ້ເປັນບຸດມະນຸດນີ້ ຊິຖືກພວກອິດສະຣາເອັນມອບໃຫ້ຄົນຕ່າງຊາດ
ແລ້ວເຂົາຊິດູໝິ່ນເຢາະເຢີ້ຍ ຖົ່ມນໍ້າລາຍໃສ່
18:33 ແລ້ວພວກເຂົາຊິຂ້ຽນຊິຕີ ແລ້ວໃນທີ່ສຸດກໍຊິຂ້າເຮົາ ແລ້ວໃນມື້ທີ່ສາມເຮົາຊິມີ
ຊີວິດເປັນຄືນມາອີກ”
18:34 ແຕ່ພວກລູກສິດນັ້ນບໍ່ເຂົ້າໃຈຈັກແນວທີ່ ພຣະເຢຊູ ເວົ້ານັ້ນ ຍ້ອນວ່າມັນຖືກ
ປິດບັງໄວ້ຈາກເຂົາໆ ເລີຍຕີຄວາມໝາຍບໍ່ອອກຊໍ້າ
18:35 ຕອນ ພຣະເຢຊູ ເດີນທາງໄປ ເຢຣູຊາເລັມ ໃກ້ຊິຮອດເມືອງ ເຢຣິໂກ ແລ້ວຢູ່
ຂ້າງທາງນັ້ນໄດ້ມີຄົນຕາບອດຜູ້ໜຶ່ງພວມນັ່ງຂໍທານຢູ່
18:36 ແລ້ວພໍໄດ້ຍິນຄົນຫລວງຫລາຍຜ່ານມາ ເຖົ້າຕາບອດນັ້ນເລີຍຖາມເຖິງ
ຄວາມໝາຍຂອງເຫດການ
18:37 ພວກຄົນນັ້ນເລີຍບອກເຂົາເຖິງ ພຣະເຢຊູ ໄທບ້ານ ນາຊາເຣັດ ທີ່ພວມຊິ
ຜ່ານມາ
18:38 ພໍຮູ້ຈັກຈັ່ງຊັ້ນຄົນຕາບອດເລີຍຮ້ອງຂຶ້ນວ່າ “ ພຣະເຢຊູ ເຊື້ອສາຍຂອງກະ-
ສັດ ດາວິດ ເອີຍ ຂໍອີຕົນຜູ້ຂ້າແໜ່ທ້ອນ”
18:39 ແຕ່ວ່າພວກຄົນທີ່ແຫ່ຍ່າງອອກກ່ອນ ພຣະເຢຊູ ກໍຫ້າມເຖົ້າຕາບອດນັ້ນໄວ້ບໍ່
ໃຫ້ເວົ້າ ແຕ່ແຮງຫ້າມກໍແຮງຮ້ອງຂໍຄວາມຊ່ອຍເຫລືອຈາກ ພຣະເຢຊູ ຫລາຍຂຶ້ນ
18:40 ພຣະເຢຊູ ເລີຍຢຸດຢືນຢູ່ ສັ່ງໃຫ້ເຂົາຈູງຄົນຕາບອດນັ້ນເຂົ້າມາຫາ ພໍເຖົ້າ
ຕາບອດມາຮອດແລ້ວ ພຣະເຢຊູ ຖາມລາວວ່າ

18:41 “ທ້າວເອີຍ ຊິໃຫ້ເຮົາຊ່ອຍຫຍັງເຈົ້າ” ເຖົ້າຕາບອດເວົ້າວ່າ “ນາຍຜູ້ຂ້າເອີຍ
ຜູ້ຂ້າຢາກເຫັນຮຸ່ງນີ້ແລ້ວ”
18:42 ພຣະເຢຊູ ເລີຍບອກ ລາວ ວ່າ “ເອີ້ ເຫັນຮຸ່ງຊະ ເຈົ້າໆ ເຊົາເປັນດີແລ້ວ
ຍ້ອນຄວາມເຊື່ອຂອງເຈົ້າ”
18:43 ພໍເວົ້າແລ້ວ ເຖົ້າຕາບອດນັ້ນກໍເຊົາກັບໜ້ອງ ແລ້ວໄດ້ຕາມ ພຣະເຢຊູ ໄປ
ສັນລະເສີນພຣະເຈົ້າຢູ່ຫັ້ນ ແລ້ວພວກຄົນທີ່ເຫັນກໍຍົກຍ້ອງສັນລະເສີນພຣະເຈົ້າ
ນໍາກັນ

## ລູກາ ບົດທີ 19

19:1 ແລ້ວ ພຣະເຢຊູ ໄດ້ເຂົ້າເມືອງ ເຢຣິໂກ ຕອນເພິ່ນພວມຊິຜ່ານໄປ
19:2 ແລ້ວ ນີ້ແຫລະ ມີຄົນໜຶ່ງຊື່ນາຍ ຊັກຂາຍ ເປັນຫົວໜ້າພວກຄົນເກັບພາສີ
ແລ້ວເຂົາກໍຮັ່ງມີຫລາຍ
19:3 ຊັກຂາຍ ນີ້ ລາວ ເປັນຄົນເຕ້ຍ ຢາກເຫັນ ພຣະເຢຊູ ພໍແຮງ ແຕ່ມີຄົນບັງເລີຍ
ເຫັນບໍ່ໄດ້
19:4 ລາວ ເລີຍແລ່ນອອກໄປກ່ອນ ໄປປີນຂຶ້ນຕົ້ນໝາກເດື່ອ ຖ້າເບິ່ງ ພຣະເຢຊູ ຊິ
ຜ່ານມາ
19:5 ແລ້ວພໍ ພຣະເຢຊູ ມາຮອດນັ້ນ ກໍຫລຽວຂຶ້ນເບິ່ງ ຊັກຂາຍ ເວົ້າວ່າ “ ຊັກຂາຍ
ໆ ລົງມາໄວໆ ເດີ້ ມື້ນີ້ເຮົາຊິໄປພັກຢູ່ເຮືອນເຈົ້າ”
19:6 ຊັກຂາຍ ກໍເລີຍຟ້າວລົງມາຕ້ອນຮັບ ພຣະເຢຊູ ດີໃຈຢ່າງໃຫຍ່
19:7 ພໍພວກໄທບ້ານເຫັນ ກໍພາກັນໂຈມຕີ ພຣະເຢຊູ ທີ່ເພິ່ນຊິໄປເປັນແຂກຢູ່ໃນ
ເຮືອນຂອງຄົນຂີ້ບາບຈັ່ງຊີ້
19:8 ແລ້ວ ຊັກຂາຍ ກໍຢຸດຢືນ ແລ້ວເວົ້າໃຫ້ ພຣະເຢຊູ ຟັງວ່າ “ນາຍຜູ້ຂ້າເອີຍ ແຕ່ນີ້
ໄປເຂົ້າຂອງເງິນທອງທີ່ຜູ້ຂ້າມີຢູ່ ກໍຊິແບ່ງໃຫ້ພວກຄົນຈົນເຄິ່ງໜຶ່ງ ກັບຜູ້ໃດທີ່ຜູ້-
ຂ້າເຄີຍຂີ້ໂກງມາກໍຊິເອົາທົດແທນໃຫ້ເຂົາສີ່ເທົ່າເລີຍ”
19:9 ແລ້ວ ພຣະເຢຊູ ເວົ້າວ່າ “ມື້ນີ້ເນາະ ຄວາມລອດພົ້ນໄດ້ມາຮອດເຮືອນນີ້ ມັນ
ສົມຄວນແລ້ວຍ້ອນເຂົາເປັນລູກໃນເຊື້ອສາຍຂອງ ອັບຣາຮາມ ນັ້ນຄືກັນ

19:10 ຄືເຮົາຜູ້ເປັນບຸດມະນຸດໄດ້ລົງມາເພື່ອຊອກຫາຜູ້ທີ່ຫລົງຫາຍໄປ ແລ້ວໂຜດ-
ໃຫ້ເຂົາລອດພົ້ນ”
19:11 ຕອນນັ້ນ ພໍ ພຣະເຢຊູ ໄປໃກ້ຊິຮອດເມືອງ ເຢຣູຊາເລັມ ແລ້ວ ເພິ່ນເລີຍໃຊ້
ໂອກາດທີ່ຊິເວົ້າຄຳປຽບທຽບ ໃຫ້ພວກເຂົາຟັງອີກ ຍ້ອນວ່າພວກປະຊາຊົນທີ່
ພວມຟັງເພິ່ນ ເຂົ້າໃຈວ່າລາຊະອານາຈັກຂອງພຣະເຈົ້ານັ້ນຊິຕັ້ງຂຶ້ນໃນໄວໆ ນີ້
19:12 ຈັ່ງຊັ້ນ ພຣະເຢຊູ ເວົ້າວ່າ “ມີພະຍາຜູ້ໜຶ່ງໄດ້ເດີນທາງໄປເຂດໄກໆ ເພື່ອໄປ
ຮັບມອບສິດເປັນພະຍາຂອງລາຊະອານາຈັກນັ້ນນຳ ແລ້ວກໍຊິຫລົບມາອີກ
19:13 ແຕ່ກ່ອນຊິໄປນັ້ນ ເພິ່ນກໍໄດ້ເອີ້ນຄົນໃຊ້ຂອງເພິ່ນສິບຄົນມາຮ່ວມກັນ ແລ້ວ
ມອບເງິນສິບມີນາໄວ້ໃຫ້ເຂົາ ສັ່ງວ່າ ‘ໃຫ້ເຮັດ ກິດຈະການ ຈົນກວ່າເຮົາຫລົບມາ
ເດີ້’
19:14 ບັດນີ້ ປະຊາຊົນຂອງນາຍກໍຊັງ ລາວ ເລີຍສົ່ງຄະນະຜູ້ແທນຕາມຫາບອກ-
ວ່າ ‘ພວກເຮົາບໍ່ຕ້ອງການໃຫ້ເຈົ້າຫລົບມາເປັນຜູ້ປົກຄອງເໜືອພວກເຮົາອີກຕໍ່ໄປ’
19:15 ແລ້ວມັນເປັນໄປທີ່ວ່າ ບັດ ລາວ ຫລົບເມືອຈາກການຕັ້ງເປັນພະຍາຂອງລາ-
ຊະອານາຈັກໄກນັ້ນ ກໍເລີຍເອີ້ນພວກຄົນໃຊ້ທີ່ ລາວ ໄດ້ມອບເງິນໄວ້ນັ້ນ ມາໃຫ້
ຣາຍງານໂຕເພື່ອຮູ້ຈັກວ່າພວກເຂົາຄ້າຂາຍໄດ້ກຳໄລຫລາຍຣາວໃດແຕ່ລະຄົນ
19:16 ບັດນີ້ ຄົນໃຊ້ຄົນແຣກໄດ້ເຂົ້າໄປຫາພະຍາ ບອກວ່າ ‘ເງິນມີນາຂອງນາຍນັ້ນ
ໄດ້ກຳໄລມາອີກສິບມີນາ’
19:17 ພະຍາເລີຍຊົມວ່າ ‘ເຈົ້າເປັນຄົນໃຊ້ທີ່ເຮັດດີຫລາຍ ບັດນີ້ ຍ້ອນວ່າເຈົ້າຊື່ສັດ
ໃນຂອງນ້ອຍໆ ນ້ອຍໆ ເຮົາຊິມອບສິດໃຫ້ເຈົ້າປົກຄອງສິບເມືອງ’
19:18 ແລ້ວຄົນໃຊ້ຄົນທີ່ສອງໄດ້ເຂົ້າໄປຫາພະຍາ ບອກວ່າ ‘ເງິນມີນາຂອງນາຍນັ້ນ
ໄດ້ກຳໄລມາອີກຫ້າມີນາ’
19:19 ແລ້ວພະຍາຊົມຄືກັນ ເວົ້າວ່າ ‘ເຮົາຊິມອບສິດໃຫ້ເຈົ້າປົກຄອງຫ້າເມືອງ’
19:20 ແລ້ວມີຄົນໃຊ້ອີກຄົນໜຶ່ງເຂົ້າມາບອກພະຍາວ່າ ‘ນີ້ເດ ເງິນມີນາຂອງນາຍ
ຜູ້ຂ້າເອົາຜ້າຫໍ່ມ້ຽນໄວ້ຢ່າງດີ
19:21 ຜູ້ຂ້າຢ້ານນາຍ ຍ້ອນວ່ານາຍເປັນຄົນເຄັ່ງຄັດ ໄດ້ຮຽກຮ້ອງກຳໄລຈາກແນວ
ທີ່ນາຍບໍ່ໄດ້ລົງໄວ້ ກັບເກັບກ່ຽວແນວທີ່ນາຍບໍ່ໄດ້ຫວ່ານລົງ’

19:22 ນາຍເລີຍເວົ້າວ່າ 'ເຮົາຊິຕັດສິນຕາມຄວາມເວົ້າຈາກປາກຂອງເຈົ້າເອງ ໄອ້
ຊາດຊົ່ວຮ້າຍນີ້ ຄັ່ນເຈົ້າຮູ້ວ່າເຮົາຮຽກຮ້ອງກຳໄລຈາກແນວທີ່ເຮົາບໍ່ໄດ້ລົງໄວ້ ກັບ
ເກັບກ່ຽວແນວທີ່ເຮົາບໍ່ໄດ້ຫວ່ານລົງ
19:23 ເປັນຫຍັງເຈົ້າຄືບໍ່ເອົາເງິນຂອງເຮົາໄປຝາກທະນາຄານໄວ້ ຢ່າງນ້ອຍເຮົາກໍຊິ
ໄດ້ຄືນມາພ້ອມດອກເບ້ຍບັດເຮົາຫລົບມາ'
19:24 ເວົ້າແລ້ວນາຍກໍສັ່ງພວກຄົນທີ່ຢືນຢູ່ນັ້ນໃຫ້ເອົາເງິນມີນາມາຈາກຄົນໃຊ້ຜູ້ນັ້ນ
ແລ້ວໃຫ້ຄົນໃຊ້ຜູ້ມີເງິນສິບມີນານັ້ນ
19:25 ແຕ່ພວກເຂົາເວົ້າກັບນາຍວ່າ 'ນາຍເອີຍ ຜູ້ນັ້ນມີເງິນສິບມີນາຢູ່ແລ້ວ'
19:26 ນາຍຕອບວ່າ 'ສຳລັບຜູ້ທີ່ມີແລ້ວກໍຊິເພີ່ມໃຫ້ເຂົາອີກ ແຕ່ສ່ວນຜູ້ທີ່ບໍ່ມີ ແມ່ນ
ແຕ່ແນວທີ່ເຂົາມີຢູ່ ດຽວກໍຊິເອົາຈາກເຂົາໄປໝົດ
19:27 ແລ້ວສຳລັບພວກສັດຕູທີ່ໄດ້ກະບົດຕໍ່ເຮົານັ້ນ ບໍ່ຢາກໃຫ້ເຮົາປົກຄອງເໜືອ
ນັ້ນ ໃຫ້ຈັບມາປະຫານຕໍ່ໜ້າເຮົາ ໂລດ '"
19:28 ພໍ ພຣະເຢຊູ ເວົ້າເລື່ອງປຽບທຽບນັ້ນແລ້ວ ເພິ່ນກໍໄດ້ຍ່າງນຳໜ້າອອກກ່ອນ
ຂຶ້ນໄປທາງເມືອງ ເຢຣູຊາເລັມ
19:29 ພໍໄປໃກ້ຊິຮອດບ້ານ ເບດຟາເຄ ກັບບ້ານ ເບດທາເນຍ ຢູ່ພູເຂົາທີ່ເອີ້ນກັນ
ວ່າພູໝາກກອກເທດ ແລ້ວ ພຣະເຢຊູ ໄດ້ໃຊ້ລູກສິດຂອງເພິ່ນສອງຄົນເຂົ້າໄປໃນ
ໝູ່ບ້ານ
19:30 ບອກວ່າ "ໃຫ້ເຂົ້າໄປໃນໝູ່ບ້ານ ແລ້ວຊິເຫັນລາໜຸ່ມໂຕໜຶ່ງຜູກຢູ່ ທີ່ຍັງບໍ່ທັນ
ມີໃຜຂຶ້ນຂີ່ຫລັງມັນຈັກເທື່ອ ແລ້ວໃຫ້ຈູງມາພີ້ ໂລດ ເດີ້"
19:31 ແລ້ວຄັ່ນມີຜູ້ໃດຖາມກໍໃຫ້ບອກເຂົາວ່າ "ນາຍຕ້ອງການຊິໃຊ້"
19:32 ພໍລູກສິດເຂົ້າໄປໃນໝູ່ບ້ານກໍເຫັນລາໜຸ່ມໂຕນັ້ນຕາມທີ່ ພຣະເຢຊູ ບອກໄວ້
19:33 ຕອນເຂົາພວມແກ້ເຊືອກຢູ່ນັ້ນ ເຈົ້າຂອງລາເລີຍຖາມວ່າ "ເຈົ້າແກ້ເຊືອກລາ
ເຮັດຫຍັງ"
19:34 ລູກສິດຂອງ ພຣະເຢຊູ ກໍຕອບວ່າ "ນາຍເຮົາຕ້ອງການຊິໃຊ້"
19:35 ບັດນີ້ ພວກລູກສິດກໍຈູງລານັ້ນມາໃຫ້ ພຣະເຢຊູ ແລ້ວເອົາເສື້ອຄຸມຂອງເຂົາ
ປູເທິງຫລັງມັນ ແລ້ວຊ່ອຍ ພຣະເຢຊູ ຂຶ້ນນັ່ງເທິງຫລັງລາ

19:36 ພວມໄປຢູ່ນັ້ນ ພວກປະຊາຊົນກໍພາກັນເອົາເສື້ອຄຸມຂອງໂຕປູລົງໃສ່ທາງ
19:37 ພໍເພິ່ນໃກ້ຊິລົງໄຫລ່ເຂົາໝາກກອກເທດນັ້ນ ພວກລູກສິດທັງໝົດກໍພາກັນ
ຮ້ອງສັນລະເສີນພຣະເຈົ້າດ້ວຍສຽງດັ່ງ ຍ້ອນການອັດສະຈັນອັນຍິ່ງໃຫຍ່ທີ່ເຂົາ
ໄດ້ເຫັນເພິ່ນເຮັດ
19:38 ຮ້ອງພ້ອມກັນວ່າ "ສາທຸການ ຂໍຊົງພຣະຈະເລີນ ກະສັດຜູ້ສະເດັດມາໃນ
ພຣະນາມຂອງອົງພຣະຜູ້ເປັນເຈົ້າ ຂໍໃຫ້ມີສັນຕິພາບໃນສະຫວັນ ກັບສະຫງ່າ-
ລາສີໃນທີ່ສູງສຸດເຖີ້ນ"
19:39 ແຕ່ພວກຄະນະ ຟາຣີຊາຍ ຜູ້ລາງຄົນທີ່ຢູ່ນໍານັ້ນ ໄດ້ເອີ້ນທ້ວງ ພຣະເຢຊູ ວ່າ
"ອາຈານ ໃຫ້ຫ້າມລູກສິດໄວ້ *ບໍ່ໃຫ້ເວົ້າແນວນັ້ນ*"
19:40 ແຕ່ ພຣະເຢຊູ ບອກເຂົາວ່າ "ຄັ່ນຄົນພວກຊິເຊົາຍົກຍ້ອງສັນລະເສີນ ແມ່ນ
ແຕ່ພວກກ້ອນຫີນແນວໝູ່ນີ້ກໍຊິຮ້ອງຂຶ້ນມາ ໂລດ "
19:41 ພໍ ພຣະເຢຊູ ໄປໃກ້ຊິຮອດແລ້ວຫລຽວເຫັນເມືອງ ເຢຣູຊາເລັມ ຈັ່ງຮ້ອງໄຫ້
ນໍ້າຕາໄຫລ
19:42 ເວົ້າວ່າ "ໂອ່ນໍ້ ອ້າຍເອີຍ ຄັ່ນພວກເຈົ້າຮູ້ຈັກແນວທາງສັນຕິພາບນັ້ນ ໃນສະ-
ເພາະມື້ນີ້ເອງ ແຕ່ທັນທີທາງນັ້ນ ຖືກປິດບັງໄວ້ຈາກຕາພວກເຈົ້າແລ້ວ
19:43 ແລ້ວອີກບໍ່ໂດນພວກສັດຕູຂອງພວກເຈົ້າຊິມາຕັ້ງທັບອ້ອມປິດພວກເຈົ້າໄວ້
ໝົດຄູ່ທາງ
19:44 ແລ້ວຊິພັງລົງເຈົ້າຢູ່ບໍ່ເຊົາຈົນກວ່າເມືອງຊິຮາບຄືໜ້າກອງ ຕຶກຫີນຊິພັງລົງ
ແຕກມຸ່ນໄປໝົດບໍ່ເຫລືອວາງເທິນກັນຈັກກ້ອນ ຍ້ອນວ່າເຈົ້າບໍ່ຮູ້ຈັກຊໍ້າ ຍາມເວ-
ລາທີ່ພຣະຜູ້ ກະລຸນາສະເດັດລົງມາຢ້ຽມເຈົ້າ"
19:45 ພໍ ພຣະເຢຊູ ໄປຮອດແລ້ວ ເພິ່ນກໍເຂົ້າໄປໃນເດີ່ນພຣະວິຫານ ໄລ່ພວກຄົນທີ່
ຄ້າຂາຍຫາກໍາໄລນໍາປະຊາຊົນໃຫ້ໜີອອກໄປ
19:46 ພ້ອມເວົ້າກັບພວກເຂົາວ່າ "ມີຄໍາຂຽນໄວ້ວ່າ ເຮືອນຂອງເຮົາເປັນໝ້ອງອະທິ-
ຖານເວົ້ານໍາພຣະເຈົ້າ ແຕ່ວ່າພວກເຈົ້າມາເຮັດເປັນຖໍ້າຂອງພວກໂຈນ"

19:47 ແລ້ວ ພຣະເຢຊູ ໄດ້ສັ່ງສອນປະຊາຊົນໃນເດີ່ນພຣະວິຫານນັ້ນຄູ່ມື້ ແຕ່ວ່າ
ຄະນະຫົວໜ້າປະໂລຫິດ ກັບພວກນັກທຳ ກັບພວກຜູ້ນຳຂອງບ້ານເມືອງ ໄດ້ພະ-
ຍາຍາມຫາທາງຊິຈັດການ ພຣະເຢຊູ
19:48 ແຕ່ພວກເຂົາເຮັດບໍ່ໄດ້ ຍ້ອນວ່າປະຊາຊົນມັກຖ້າຮັບຟັງແຕ່ຄຳສອນຂອງ
ເພິ່ນ

# ລູກາ ບົດທີ 20

20:1 ຢູ່ມາມື້ໜຶ່ງ ຕອນທີ່ ພຣະເຢຊູ ພວມບອກສອນຂ່າວດີໃຫ້ປະຊາຊົນຢູ່ໃນພຣະ-
ວິຫານ ໄດ້ມີຄະນະຫົວໜ້າປະໂລຫິດກັບພວກນັກທຳ ກັບພວກຜູ້ນຳຂອງບ້ານ-
ເມືອງໄດ້ມາຜະເຊີນກັບ ພຣະເຢຊູ
20:2 ແລ້ວຖາມເພິ່ນວ່າ “ເຈົ້າໄດ້ຮັບອະນຸຍາດມາຈາກຜູ້ໃດ ບອກມາດູ ຄືແມ່ນໃຜ
ໃຫ້ສິດເຈົ້າເຮັດຈັ່ງຊີ້”
20:3 ແຕ່ ພຣະເຢຊູ ຕອບເຂົາວ່າ “ເຮົາຊິຖາມພວກເຈົ້າແນວໜຶ່ງກ່ອນ ໃຫ້ບອກມາ
ວ່າ
20:4 ແມ່ນໃຜໃຊ້ ໂຢຮັນ ມາບອກປະຊາຊົນໃຫ້ຮັບຈຸ່ມນ້ຳນັ້ນ ພຣະເຈົ້າຜູ້ຢູ່ເທິງ
ສະຫວັນ ຫລືວ່າຄົນຊື່ໆ”
20:5 ບັດນີ້ ພວກເຂົາເລີຍປຶກສາກັນວ່າ “ຄັ່ນພວກເຮົາຊິຕອບວ່າ ‘ພຣະເຈົ້າຜູ້ຢູ່
ເທິງສະຫວັນ’ ເຂົາກໍຊິເວົ້າໃຫ້ເຮົາວ່າ ‘ຄັ່ນຈັ່ງຊັ້ນເປັນຫຍັງພວກເຈົ້າຄືບໍ່ເຊື່ອ
ລາວ ’
20:6 ແຕ່ຄັ່ນເຮົາຊິຕອບວ່າ ‘ເປັນນຳຄົນຊື່ໆ’ ພວກປະຊາຊົນຊິພາກັນຄວ່າງກ້ອນ-
ຫີນໃສ່ເຮົາ ຍ້ອນພວກເຂົາໝັ້ນໃຈວ່າ ໂຢຮັນ ນັ້ນຄືຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າ”
20:7 ເຂົາເລີຍບອກ ພຣະເຢຊູ ວ່າ ເຂົາບໍ່ຮູ້ຈັກວ່າແມ່ນໃຜສັ່ງ
20:8 ພຣະເຢຊູ ເລີຍຕອບເຂົາວ່າ “ຄັ່ນຈັ່ງຊັ້ນ ເຮົາຊິບໍ່ໄດ້ບອກພວກເຈົ້າຄືກັນວ່າ
ໃຜອະນຸຍາດໃຫ້ເຮົາເຮັດ”

20:9 ພໍເວົ້າແລ້ວ ພຣະເຢຊູ ຕັ້ງສອນເລື່ອງປຽບທຽບໃຫ້ປະຊາຊົນຟັງວ່າ "ມີຜູ້ຊາຍ
ຜູ້ໜຶ່ງເຮັດສວນອະງຸ່ນ ແລ້ວເລີຍມອບໄວ້ໃຫ້ຄົນອື່ນເຊົ່າ ແລ້ວ ລາວ ກໍໄດ້ເດີນ-
ທາງໄປເຂດໄກໆ ເປັນເວລາດົນນານ
20:10 ພໍຮອດຍາມເກັບກ່ຽວແລ້ວ ເຈົ້າຂອງສວນໄດ້ສົ່ງຄົນໃຊ້ຜູ້ໜຶ່ງໄປຫາພວກ
ຄົນທີ່ເຮັດສວນ ເພື່ອໄປເອົາໝາກເອົາຜົນສ່ວນທີ່ເປັນຄ່າເຊົ່າ ແຕ່ວ່າ ພວກຄົນທີ່
ເຮັດສວນນັ້ນກໍພາກັນຕີຄົນໃຊ້ໄລ່ຄືນເມືອມືບໍ່
20:11 ແລ້ວເທື່ອທີ່ສອງ ເຈົ້າຂອງສວນໄດ້ສົ່ງຄົນໃຊ້ໄປອີກ ແລ້ວພວກຄົນທີ່ເຮັດ
ສວນນັ້ນກໍຄຽນຕີ ແລ້ວເຮັດແນວຢ່າງເປັນຕາອາຍໃສ່ ໄລ່ຫລົບເມືອມືບໍ່ອີກຄືເກົ່າ
20:12 ແລ້ວເທື່ອທີ່ສາມ ເຈົ້າຂອງສວນກໍສົ່ງຄົນໃຊ້ໄປອີກ ແລ້ວພວກຄົນທີ່ເຮັດ
ສວນນັ້ນກໍເຮັດໃຫ້ເຂົາເປັນແຜບາດເຈັບຫລາຍ ແລ້ວກໍໄລ່ອອກໄປ
20:13 ບັດນີ້ເຈົ້າຂອງສວນກໍຄຶດໃນໃຈວ່າ 'ກູຊິເຮັດຈັ່ງໃດດີນໍ້ກັບພວກນີ້ ເອີ້ ກູຊິສົ່ງ
ລູກຊາຍໂທນທີ່ກູຮັກແພງຫລາຍໄປເອງ ພວກເຂົາພໍເຫັນຄືຊິໃຫ້ກຽດລູກກູຢູ່
ດອກ'
20:14 ແຕ່ວ່າພໍພວກຊາວສວນເຫັນລູກຊາຍເຈົ້າຂອງສວນກໍເລີຍຊຸມກັນວ່າ 'ເອີ້
ໂຕ່ນຄ້ານນີ້ເນາະຊິເປັນຜູ້ຄອງມູນພໍ່ມັນ ເຮົາພາກັນຈັດການຂ້າມັນຖິ້ມຊິເປັນ
ຫຍັງ ແລ້ວມູນມັງນີ້ເຮົາກໍຊິໄດ້ມາເປັນຂອງເຮົາໝົດ'
20:15 ແລ້ວເຂົາກໍໄລ່ອອກໄປຂ້າຖິ້ມຢູ່ທາງນອກສວນ" ພໍເວົ້າແລ້ວ ພຣະເຢຊູ ໄດ້
ຖາມພວກທີ່ຟັງຢູ່ນັ້ນວ່າ "ຄຶດເບິ່ງ ເຈົ້າຂອງສວນຊິເຮັດແນວໃດກັບຄົນພວກນີ້
20:16 ລາວ ຊິຕ້ອງກັບມາຈັດການທຳລາຍຄົນເຮັດສວນພວກນີ້ ແລ້ວຍົກສວນໃຫ້
ຜູ້ອື່ນເຮັດ" ພໍຄົນຢູ່ຫັ້ນໄດ້ຍິນແລ້ວກໍເລີຍເວົ້າວ່າ "ຂໍຢ່າໃຫ້ມັນເປັນຈັ່ງຊັ້ນເລີຍ"
20:17 ພຣະເຢຊູ ກໍເບິ່ງພວກເຂົາແລ້ວເວົ້າວ່າ "ແລ້ວເປັນຫຍັງ ພຣະຄຳ ຂອງ
ພຣະເຈົ້າຈັ່ງຂຽນໄວ້ວ່າ 'ກ້ອນຫີນທີ່ພວກນາຍປະຕິເສດບໍ່ຍອມຮັບນັ້ນໄດ້ມາເປັນ
ຫີນມຸມເອກທີ່ສຳຄັນ'
20:18 ຜູ້ໃດເຕະສະດຸດລົ້ມໃສ່ຫີນກ້ອນນີ້ ໂຕເຂົາຊິພັງທະລາຍລົງ ແຕ່ຄັນຫີນກ້ອນ
ນັ້ນທັບໃສ່ໃຜ ຜູ້ນັ້ນຊິມຸ່ນຄືຜົງແປ້ງ"

20:19 ແລ້ວໃນໂມງນັ້ນ ພວກຫົວໜ້າປະໂລຫິດ ກັບພວກນັກທຳ ແຮງຫາທາງທີ່ຊິ
ຈັບ ພຣະເຢຊູ ໃຫ້ໄດ້ ຍ້ອນເຂົາຮູ້ວ່າ ເພິ່ນເວົ້າເລື່ອງປຽບທຽບນີ້ໃສ່ເຂົາ
20:20 ເຂົາຈັ່ງຈ້ອງເບິ່ງ ພຣະເຢຊູ ຢູ່ຕະຫລອດ ກັບສົ່ງສາຍລັບທຳທ່າເປັນຄົນດີໄປ
ຫາ ພຣະເຢຊູ ຖ້າຈັບຜິດໃນຄວາມເວົ້າຂອງເພິ່ນ ເພື່ອຊິແຈ້ງຈັບ ພຣະເຢຊູ ມອບ
ໃຫ້ຫົວໜ້າບ້ານເມືອງ
20:21 ແລ້ວພວກສາຍລັບນັ້ນໄດ້ຖາມ ພຣະເຢຊູ ວ່າ “ອາຈານເອີຍ ພວກເຮົາຮູ້ວ່າ
ອາຈານທັງເວົ້າທັງສອນຢ່າງຖືກຕ້ອງໝົດ ກັບບໍ່ໄດ້ເຂົ້າຂ້າງເຫັນແກ່ຜູ້ໃດເລີຍ
20:22 ຊ່ອຍບອກແໜ່ ມັນສົມຄວນບໍ້ ທີ່ພວກຢິວເຮົາຕ້ອງເສຍພາສີໃຫ້ຈັກກະພັດ
ກາຍຊາ ”
20:23 ແຕ່ ພຣະເຢຊູ ຮູ້ຈັກກົນອຸບາຍຂອງເຂົາເລີຍເວົ້າວ່າ “ເຈົ້າລອງດູເຮົາເຮັດ
ຫຍັງ
20:24 ໃຫ້ເຮົາເບິ່ງເງິນເດນາຣີອົນຫລຽນໜຶ່ງ ແລ້ວບອກເຮົາວ່າ ແມ່ນຮູບກັບຊື່ຂອງ
ໃຜຢູ່ໃນຫລຽນເງິນນັ້ນ” ເຂົາຕອບວ່າ “ຂອງ ກາຍຊາ ”
20:25 ພຣະເຢຊູ ເລີຍເວົ້າວ່າ “ຈັ່ງຊັ່ນຂອງໆ ກາຍຊາ ກໍມອບໃຫ້ ກາຍຊາ ແລ້ວ
ຂອງໆ ພຣະເຈົ້າກໍມອບໃຫ້ພຣະເຈົ້າ”
20:26 ແລ້ວພວກສາຍລັບນັ້ນບໍ່ສາມາດຈັບຜິດຄວາມເວົ້າຂອງ ພຣະເຢຊູ ຕໍ່ໜ້າ
ພວກປະຊາຊົນໄດ້ ແລ້ວເຂົາກໍງຶດໃນຄຳຕອບຂອງ ພຣະເຢຊູ ເລີຍບໍ່ປາກອີກ
20:27 ແລ້ວມີນັກສາສະໜາອີກພວກໜຶ່ງຊື່ວ່າພວກ ຊາດູກາຍ ພວກນີ້ຖືກັນວ່າ ບັດ
ຕາຍໄປບໍ່ມີການຄືນມາອີກ ພວກເຂົາມາຫາ ພຣະເຢຊູ
20:28 ຖາມວ່າ “ອາຈານເອີຍ ໂມເຊ ໄດ້ຂຽນບອກພວກເຮົາໄວ້ວ່າ ຜູ້ທີ່ແຕ່ງງານ
ກັນແລ້ວຍັງບໍ່ທັນມີລູກ ຄັ່ນຕາຍປະເມຍ ນ້ອງຊາຍຕ້ອງເອົາເອື້ອຍໃພ້ມາເປັນ
ເມຍ ເພື່ອສືບແທນອ້າຍ
20:29 ບັດນີ້ ມີຜູ້ຊາຍເປັນອ້າຍນ້ອງກັນເຈັດຄົນ ອ້າຍກົກເອົາເມຍແລ້ວຕາຍປະ
ກ່ອນ ບໍ່ທັນມີລູກ
20:30 ແລ້ວນ້ອງຊາຍຜູ້ທີ່ສອງກໍເອົາເອື້ອຍໃພ້ມາເປັນເມຍແທນອ້າຍຜູ້ກົກ ແລ້ວກໍ
ຕາຍປະອີກ ບໍ່ທັນມີລູກຄືກັນ

20:31 ແລ້ວນ້ອງຊາຍຜູ້ທີ່ສາມກໍເອົາເອື້ອຍໃພ້ມາເປັນເມຍຄືກັນ ແລ້ວພວກເຂົາ
ເຮັດແບບນີ້ຈົນໝົດທັງເຈັດຄົນ ຕາຍປະໝົດ ບໍ່ມີລູກຈັກຄົນ
20:32 ແລ້ວໃນທີ່ສຸດ ແມ່ຍິງກໍຕາຍຄືກັນ
20:33 ຈັ່ງຊັ້ນ ບັດຮອດຍາມຄົນຊິຄືນມາແຕ່ຕາຍພູ້ນ ແມ່ຍິງຜູ້ນີ້ຊິເປັນເມຍຂອງໃຜ
ກັນແນ່ ຍ້ອນເຄີຍເປັນເມຍຂອງຄົນໝົດທັງເຈັດມາແລ້ວ"
20:34 ພຣະເຢຊູ ກໍຕອບວ່າ "ມີແຕ່ໃນຍຸກນີ້ຊື່ໆ ທີ່ຄົນກິນດອງເປັນຜົວເມຍກັນ
20:35 ແຕ່ສຳລັບຜູ້ທີ່ນັບວ່າສົມຄວນຊິຄືນມາແຕ່ຕາຍ ມີຊີວິດຕໍ່ໃນຍຸກໜ້າພູ້ນ
ພວກເຂົາຊິບໍ່ກິນດອງເປັນຜົວເມຍກັນອີກຄືກັນກັບຍຸກນີ້ດອກ
20:36 ແລ້ວພວກເຂົານັ້ນຊິບໍ່ຕາຍອີກຈັກເທື່ອ ຊິມີຊີວິດຢັ່ງຢືນຢູ່ຕະຫລອດແບບ
ເທວະທູດຂອງພຣະເຈົ້າ ຍ້ອນວ່າພວກເຂົາເປັນລູກຂອງພຣະເຈົ້າ ຜູ້ມີສິດມີສ່ວນ
ໃນການຄືນມາແຕ່ຕາຍ
20:37 ແລ້ວແມ່ນແຕ່ ໂມເຊ ໃນບ່ອນ ລາວ ຂຽນເຖິງພຸ່ມໄມ້ທີ່ໄຟລຸກແຕ່ບໍ່ໄໝ້ນັ້ນ
ລາວ ໄດ້ເອີ້ນພຣະເຈົ້າວ່າ ເປັນພຣະຜູ້ເປັນເຈົ້າຂອງ ອັບຣາຮາມ ກັບຂອງ ອີ-
ຊາກ ກັບຂອງ ຢາໂຄບ
20:38 ຈັ່ງຊັ້ນ ພຣະເຈົ້ານີ້ເປັນພຣະຜູ້ເປັນເຈົ້າຂອງຄົນເປັນ ບໍ່ແມ່ນຂອງຄົນຕາຍ
ຍ້ອນວ່າຄົນເຮົານີ້ ມີຊີວິດຢູ່ໄດ້ຍ້ອນພຣະເຈົ້າ ແລ້ວກໍມີຊີວິດຢູ່ເພື່ອພຣະເຈົ້າ"
20:39 ພຣະເຢຊູ ເວົ້າແລ້ວ ພວກນັກທຳຜູ້ລາງຄົນໄດ້ເວົ້າວ່າ "ອາຈານເອີຍ ເຈົ້າ
ເວົ້າແມ່ນແລ້ວ"
20:40 ເຂົາເວົ້າຈັ່ງຊີ້ຍ້ອນບໍ່ກ້າຖາມອີຫຍັງເພິ່ນອີກຕໍ່ໄປ
20:41 ແລ້ວ ພຣະເຢຊູ ກໍເລີຍຖາມເຂົາວ່າ "ມັນຊິເປັນໄປໄດ້ບໍ້ທີ່ຄົນເວົ້າກັນວ່າ
ພຣະຜູ້ໂຜດໂລກນັ້ນ ຊິເປັນລູກເປັນຫລານໃນເຊື້ອສາຍຂອງເພິ່ນ
20:42 ຍ້ອນວ່າ ກະສັດ ດາວິດ ເອງກໍຍັງຂຽນໄວ້ໃນໜັງສືບົດ ເພງສັນລະເສີນ ເວົ້າ-
ເຖິງພຣະຜູ້ໂຜດນັ້ນວ່າ 'ພຣະເຈົ້າໄດ້ບອກນາຍຊີວິດຂອງຜູ້ຂ້ານັ້ນວ່າ "ໃຫ້ເຈົ້າ
ນັ່ງຖ້າຢູ່ທາງຂວາຂອງເຮົາຊະກ່ອນເດີ້
20:43 ກວ່າເຮົາເອົາຊະນະພວກສັດຕູຂອງເຈົ້າ ໃຫ້ມັນເປັນໝ້ອງຢຽບວາງຕີນໃຫ້
ເຈົ້າ"'

20:44 ບັດນີ້ ຄັນກະສັດ ດາວິດ ເອີ້ນພຣະຜູ້ໂຜດນັ້ນວ່າ 'ນາຍຊີວິດຜູ້ຂ້າ' ພຣະຜູ້
ນັ້ນຊິເປັນລູກຫລານຂອງກະສັດ ດາວິດ ໄດ້ຈັ່ງໃດ"
20:45 ຕອນຢູ່ໜ້າຄູ່ຄົນນັ້ນ ພຣະເຢຊູ ໄດ້ບອກພວກລູກສິດຂອງເພິ່ນວ່າ
20:46 "ໃຫ້ລະວັງພວກນັກທຳນີ້ເດີ້ ຍ້ອນພວກເຂົາມັກນຸ່ງເສື້ອຄຸມຍາວ ໃຫ້ຄົນນັບ
ໜ້າຖືຕາ ຄຳນັບຢູ່ກາງຕະຫລາດ ແລ້ວກໍຊອກນັ່ງແຕ່ໜ້ອງສູງຊຶ່ງມີກຽດໃນໂຮງ-
ທຳ ກັບໃນງານກິນລ້ຽງຕ່າງໆ ນຳ
20:47 ພວກເຂົາເນາະ ມັກທຳທ່າອະທິຖານເວົ້ານຳພຣະເຈົ້າຍາວໆ ຄືຄົນຈົບຄົນດີ
ແຕ່ພວກນີ້ຊອກໂກງພວກແມ້ໝ້າຍເອົາເຮືອນຊານຂອງເຂົາ ພວກນີ້ເນາະຊິເປັນ
ໂທດໜັກຫລາຍກວ່າໝູ່"

## ລູກາ ບົດທີ 21

21:1 ພວມເວົ້າຢູ່ນັ້ນ ພຣະເຢຊູ ຫລຽວເຫັນພວກຄົນຮັ່ງມີພວມພາກັນເອົາຊັບມາ
ໃສ່ຫີບຖວາຍ
21:2 ກັບໄດ້ເຫັນແມ້ໝ້າຍທຸກຍາກຜູ້ໜຶ່ງ ເອົາເງິນກີບສອງຫລຽນອັນສຸດທ້າຍທີ່
ເຂົາມີຢູ່ ມາຖວາຍຄືກັນ
21:3 ພຣະເຢຊູ ເລີຍເວົ້າຂຶ້ນວ່າ "ເຮົາຊິເວົ້າຕາມຊື່ນີ້ເນາະ ແມ້ໝ້າຍຄົນທຸກຍາກນີ້
ໄດ້ຖວາຍຫລາຍກວ່າໝົດຄູ່ຄົນຢູ່ນີ້
21:4 ຍ້ອນວ່າພວກເຂົານັ້ນມີແຕ່ຖວາຍເງິນເຫລືອໃຊ້ຊື່ໆ ແຕ່ແມ້ໝ້າຍຜູ້ທຸກຍາກນີ້
ລາວ ໄດ້ຖວາຍເງິນຈົນໝົດທີ່ ລາວ ມີໄວ້ເພື່ອລ້ຽງໂຕເອງ"
21:5 ບັດນີ້ ມີຜູ້ລາງຄົນພວມຊົມຄວາມງາມຂອງພຣະວິຫານນັ້ນ ທີ່ຕົກແຕ່ງດ້ວຍ
ຫີນງາມກັບຂອງຖວາຍຕ່າງໆ ຢ່າງດີ ພຣະເຢຊູ ເລີຍເວົ້າວ່າ
21:6 "ຂອງແນວໝູ່ນີ້ທີ່ພວກເຈົ້າເບິ່ງວ່າງາມ ມັນຊິມີມື້ມາທີ່ມັນກໍຊິຖືກພັງທະລາຍ
ລົງ ກ້ອນຫີນນີ້ຊິບໍ່ເຫລືອຈັກກ້ອນທີ່ເທິນຊ້ອນກັນ"
21:7 ພວກເຂົາເລີຍຖາມ ພຣະເຢຊູ ວ່າ "ອາຈານເອີຍ ອີກໂດນປານໃດຈັ່ງຊິເກີດ
ຂຶ້ນ ຊິມີເຄື່ອງໝາຍສຳຄັນອີຫຍັງບໍ້ ທີ່ຊິບົ່ງບອກໄວ້ກ່ອນ"

21:8 ພຣະເຢຊູ ເລີຍບອກເຂົາວ່າ "ລະວັງໃຫ້ດີເດີ້ ຢ່າຫລົງກົບຜູ້ໃດເລີຍ ຍ້ອນວ່າ
ຊິມີຫລາຍຄົນມາໃນນາມຂອງເຮົາ ອ້າງວ່າ 'ເຮົານີ້ເປັນພຣະຜູ້ໂຜດນັ້ນ' ກັບຊິ
ອ້າງວ່າ 'ຍາມນັ້ນໃກ້ຊິມາຮອດແລ້ວ' ຈັ່ງຊັ້ນ ຢ່າຕິດຕາມເຂົາໄປເດີ້
21:9 ແລ້ວບັດພວກເຈົ້າໄດ້ຍິນວ່າມັນເກີດສົງຄາມວຸ້ນວາຍຢູ່ໜ້ອງນັ້ນໜ້ອງນີ້ ບໍ່
ໃຫ້ຕົກໃຈຢ້ານເດີ້ ຍ້ອນວ່າແນວໝູ່ນີ້ຊິຕ້ອງເປັນໄປຢູ່ແລ້ວ ແຕ່ຍັງຊິບໍ່ທັນຮອດ
ປາຍຍຸກປາຍສະໄໝນັ້ນ
21:10 ແລ້ວເພິ່ນວ່າ ຄືຊິເກີດປະເທດນັ້ນປະເທດນີ້ ລາຊະອານາຈັກນັ້ນລາຊະອາ-
ນາຈັກນີ້ ລຸກຂຶ້ນຕໍ່ສູ້ກັນ
21:11 ກັບຊິເກີດແຜ່ນດິນໄຫວຫລາຍໜ້ອງ ກັບຊິເກີດການອຶດຢາກໝາກຫິວ ກັບ
ໂລກລະບາດຕ່າງໆ ກັບຊິມີລາງຮ້າຍອັນເປັນຕາຢ້ານເຮັດໃຫ້ເຫັນມາແຕ່ເທິງຟ້າ
21:12 ແຕ່ວ່າກ່ອນຊິຮອດຍາມນັ້ນ ຊິມີຄົນມາຈັບມາຂົ່ມເຫງເຮັດໃສ່ພວກເຈົ້າ ຊິ-
ມອບພວກເຈົ້າໃຫ້ຄົນໃນໂຮງທຳ ກັບເອົາໄປຂັງຄຸກໄວ້ ກັບນຳພວກເຈົ້າໄປຢູ່ຕໍ່
ໜ້າກະສັດ ກັບຕໍ່ໜ້າຫົວໜ້າບ້ານເມືອງ ຍ້ອນເຈົ້າເຫັນແກ່ນາມຂອງເຮົາ
21:13 ແຕ່ຈັ່ງໃດກໍຕາມ ມັນຊິກາຍເປັນໂອກາດດີໃຫ້ພວກເຈົ້າເປັນພະຍານເຖິງ
ເຮົາ
21:14 ຈັ່ງຊັ້ນ ໃຫ້ພວກເຈົ້າເຮັດໃຈໄວ້ໃຫ້ນິ່ງກ່ອນ ບໍ່ຕ້ອງຄຶດຫລາຍວ່າຊິຕອບຄຳ
ຖາມຂອງເຂົາແບບໃດ
21:15 ຍ້ອນວ່າເຮົາຊິດົນໃຈໃຫ້ເຈົ້າມີປັນຍາຕອບໄດ້ ແລ້ວພວກຝ່າຍກົງກັນຂ້າມ
ເຈົ້ານັ້ນຊິຈົນປັນຍາ ໝົດທາງຊິຕໍ່ຕ້ານຕອບໂຕ້ເຈົ້າ
21:16 ແມ່ນແຕ່ພໍ່ແມ່ພີ່ນ້ອງກັບໝູ່ພວກຊິທໍລະຍົດໃສ່ເຈົ້າ ຈົນຜູ້ລາງຄົນໃນພວກ
ເຈົ້າຊິຖືກເຂົາມອບໄວ້ໃຫ້ຂ້າ
21:17 ແລ້ວໝົດຄູ່ຄົນກໍຊິພາກັນຄຽດຊັງເຈົ້າ ຍ້ອນເຫັນແກ່ນາມຂອງເຮົາ
21:18 ເຖິງຂະໜາດນັ້ນ ແມ່ນແຕ່ເສັ້ນຜົມຂອງເຈົ້າເສັ້ນດຽວກໍຊິບໍ່ເສຍຫາຍ
21:19 ແລ້ວຊີວິດຂອງພວກເຈົ້າຊິປອດໄພໄວ້ຍ້ອນຄວາມອົດທົນອັນໝັ້ນຄົງຂອງ
ເຈົ້າ

21:20 ແຕ່ວ່າບັດຍາມເຈົ້າເຫັນພວກກອງທັບທະຫານມາອ້ອມເມືອງ ເຢຣູຊາເລັມ ນີ້
ຢູ່ອ້ອມຮອບ ກໍໃຫ້ຮູ້ກັນວ່າ ມັນໃກ້ຊິຖືກທຳລາຍແລ້ວ
21:21 ບັດຮອດຍາມນັ້ນ ໃຫ້ຜູ້ທີ່ຢູ່ເມືອງ ຢູດາຍ ໜີໄປລີ້ຢູ່ພູເຂົາ ແລ້ວຜູ້ທີ່ຢູ່ໃນ
ເມືອງນີ້ກໍໃຫ້ໜີອອກໄປເດີ້ ແລ້ວຜູ້ທີ່ຢູ່ນອກເມືອງກໍຢ່າຄຶດຊິເຂົ້າມາເລີຍ
21:22 ຄືມື້ທີ່ເຮົາເວົ້າເຖິງນັ້ນ ຊິເປັນມື້ລ້າງແຄ້ນລົງໂທດຂອງພຣະເຈົ້າ ໂດຍວ່າ
ໝົດຄູ່ຢ່າງຊິຕ້ອງເປັນໄປຕາມຊື່ງມີຂຽນໄວ້ *ໃນ ພຣະຄຳ ນັ້ນ*
21:23 ຍາມນັ້ນ ລະວັງພິນາດເດີ້ ພວກແມ່ຍິງທີ່ຖືພາມີທ້ອງ ກັບຜູ້ເປັນແມ່ລູກອ່ອນ
ຍ້ອນຊິເກີດໂກລາຫົນເດືອດຮ້ອນໃນແຜ່ນດິນ ຍ້ອນເປັນຍາມທີ່ແຜ່ນດິນນີ້ຊິຖືກ
ພິໂລດອັນຮ້າຍແຮງ *ຂອງພຣະເຈົ້າ*
21:24 ແລ້ວຫລາຍຄົນຊິລົ້ມລົງຍ້ອນຄົມດາບ ແລ້ວຜູ້ທີ່ຍັງຢູ່ຊິຖືກນຳອອກໄປເປັນ
ຊະເລີຍຂອງຄູ່ປະເທດ ແລ້ວເມືອງ ເຢຣູຊາເລັມ ຊິຖືກຢຽບຢ່ຳຕົກຢູ່ໃຕ້ອຳນາດ
ຂອງຄົນຕ່າງຊາດ ຈົນກວ່າຊິໝົດຍຸກການປົກຄອງຂອງເຂົາທີ່ກຳນົດໄວ້
21:25 ແລ້ວມັນຊິມີລາງຮ້າຍເຮັດໃຫ້ເຫັນໃນດວງຕະເວັນ ດວງເດືອນ ກັບພວກ
ດວງດາວ ແລ້ວໃນໂລກນີ້ຄູ່ປະເທດກໍຊິມີຄວາມໂກລາຫົນວຸ້ນວາຍ ຄືຄື້ນທະເລ
ຊັດໄປຊັດມາດັ່ງສະໜັ່ນຫວັ່ນໄຫວ
21:26 ແລ້ວຄົນຊິເປັນລົມ ຈົນຫົວໃຈຊິວາຍຍ້ອນແນວທີ່ຊິມາເກີດຂຶ້ນເທິງແຜ່ນດິນ-
ໂລກ ຄືອຳນາດໝົດຄູ່ແນວເທິງທ້ອງຟ້າກໍຊິຖືກສັ່ນສະເທືອນໄປ
21:27 ບັດຮອດຍາມນັ້ນເນາະ ຊາວໂລກທັງປວງຊິເຫັນເຮົາຜູ້ເປັນບຸດມະນຸດ ສະ-
ເດັດລົງມາໃນເມກ ປະກອບ ດ້ວຍລິດທານຸພາບ ກັບສະຫງ່າລາສີອັນຍິ່ງໃຫຍ່
21:28 ຈັ່ງຊັ້ນ ຢ່າທໍ້ໃຈເດີ້ບັດແນວໝູ່ນີ້ເລີ່ມຊິເປັນມາ ແຕ່ໃຫ້ຫລຽວເບິ່ງທ້ອງຟ້າ
ໂລດ ເດີ້ ຍ້ອນມັນໃກ້ຊິຮອດຍາມນັ້ນ ທີ່ເຮົາຊິມາກະລຸນາພວກເຈົ້າແລ້ວ"
21:29 ແລ້ວ ພຣະເຢຊູ ເວົ້າເລື່ອງປຽບທຽບໃຫ້ເຂົາຟັງວ່າ "ເບິ່ງກົກໝາກເດື່ອດູ ກັບ
ກົກໄມ້ອື່ນໆ ຄູ່ແນວນຳ
21:30 ບັດຮອດຍາມມັນຊິແຕກໃບປົ່ງໃໝ່ ພວກເຈົ້າຍັງເບິ່ງອອກໄດ້ວ່າ ໃກ້ຊິຮອດ
ລະດູຮ້ອນແລ້ວ

21:31 ຄືກັນນີ້ເນາະ ບັດຍາມເຈົ້າເຫັນແນວວຸ້ນວາຍນັ້ນເລີ່ມຊິເກີດຂຶ້ນ ໃຫ້ຮູ້ໄວ້ວ່າ
ລາຊະອານາຈັກຂອງພຣະເຈົ້າມາໃກ້ຊິຮອດແລ້ວ
21:32 ເຮົາຊິເວົ້າຄວາມຈິງຕາມຊື່ນີ້ເນາະ ຍຸກທີ່ຊິມານັ້ນ ຊິບໍ່ໄດ້ຜ່ານພົ້ນໄປຈົນ
ກວ່າແນວໝູ່ນີ້ຊິເກີດຂຶ້ນໝົດ
21:33 ຄືແມ່ນແຕ່ທ້ອງຟ້າກັບແຜ່ນດິນໂລກຊິມີມື້ສູນຫາຍໄປ ຖ້ອຍຄຳຂອງເຮົານີ້ຊິ
ຍັງຍືນຢູ່ຕະຫລອດໄປ
21:34 ຈັ່ງຊັ້ນ ໃຫ້ພວກເຈົ້າລະວັງໄວ້ໃຫ້ດີເດີ້ ຢ່າໃຫ້ຊີວິດຈິດໃຈຂອງເຈົ້າໝ່ວງໄວ້
ດ້ວຍການໂຮເຮມົວເມົາ ກັບພາລະຕ່າງໆ ທາງໂລກນີ້ເດີ້ ບໍ່ຊັ້ນມື້ທີ່ເຮົາຊິມານັ້ນ
ຊິມາໄວຢ່າງບໍ່ຄາດຄຶດເລີຍ
21:35 ແລ້ວມື້ນັ້ນຊິມາຄືກັບດັກ ລັ່ນໃສ່ຄົນໝົດທົ່ວແຜ່ນດິນໂລກ
21:36 ຈັ່ງຊັ້ນ ໃຫ້ເບິ່ງໄວ້ເດີ້ ອະທິຖານເວົ້ານຳພຣະເຈົ້າຢູ່ຄູ່ຍາມເວລາ ວ່າເຈົ້າຊິ
ສົມຄວນເປັນຜູ້ທີ່ຊິພົ້ນເຫດການແນວທີ່ຊິເປັນມານັ້ນ ກັບມີສິດຢືນຢູ່ຕໍ່ໜ້າເຮົາຜູ້
ເປັນບຸດມະນຸດ”
21:37 ໃນຕອນກາງເວັນ ພຣະເຢຊູ ໄດ້ໄປສັ່ງສອນປະຊາຊົນໃນພຣະວິຫານເປັນ
ປະຈຳ ແຕ່ໃນຍາມກາງຄືນ ເພິ່ນກໍຂຶ້ນໄປຢູ່ເທິງພູເຂົາທີ່ຄົນເອີ້ນກັນວ່າພູເຂົາໝ
າກກອກເທດ
21:38 ແລ້ວພໍຮອດຍາມເຊົ້າມືດ ຄົນຫລວງຫລາຍກໍພາກັນມາຖ້າຟັງຄຳສອນຂອງ
ເພິ່ນຢູ່ພຣະວິຫານ

## ລູກາ ບົດທີ 22

22:1 ຕອນນັ້ນ ໃກ້ຊິຮອດງານເທດສະການ ລ້ຽງກິນເຂົ້າຈີ່ທີ່ບໍ່ໃສ່ເຊື້ອ ສະຫລອງ
ຄົບອ້ອມມື້ທີ່ພຣະເຈົ້າໄດ້ກູ້ຊາດໃຫ້ພົ້ນການເປັນຂ້າທາດໃນປະເທດ ເອຢິບ
22:2 ບັດນີ້ ພວກຫົວໜ້າປະໂລຫິດກັບພວກນັກທຳຍັງຮ່ວມຫົວກັນຫາທາງຊິຈັດ-
ການຂ້າ ພຣະເຢຊູ *ເປັນທາງອ້ອມ* ຍ້ອນວ່າ ເຂົາຢ້ານປະຊາຊົນ
22:3 ຕອນນີ້ເນາະ ພະຍາມານ ຊາຕານໄດ້ເຂົ້າໃນໃຈຂອງ ຢູດາ ໄທອິດສະກາຣິ-
ອົດ ຜູ້ທີ່ນັບວ່າເປັນລູກສິດຄົນໜຶ່ງຂອງ ພຣະເຢຊູ ໃນພວກສິບສອງຄົນນັ້ນ

22:4 ພໍເຂົ້າໃນໃຈແລ້ວ ຢູດາ ກໍໄປຫາພວກຫົວໜ້າປະໂລຫິດກັບພວກຫົວໜ້າ
ຍາມເບິ່ງແຍງພຣະວິຫານ ຫາທາງທໍລະຍົດມອບ ພຣະເຢຊູ ໄວ້ໃນກໍາມືຂອງເຂົາ
22:5 ບັດນີ້ ພວກເຂົາກໍດີໃຈຢ່າງໃຫຍ່ເລີຍຕົກລົງວ່າຊິເອົາເງິນຈ້າງເຂົາ
22:6 ພໍ ຢູດາ ຕົກລົງສັນຍາກັນໄວ້ແລ້ວກໍຫາໂອກາດທໍລະຍົດມອບ ພຣະເຢຊູ ໃຫ້
ເຂົາໃນຍາມຫວ່າງ ມີຄົນບໍ່ຫລາຍ
22:7 ພໍຮອດມື້ແຮກຂອງງານລ້ຽງສະຫລອງກູ້ຊາດ ເປັນຍາມທີ່ແກະນ້ອຍຊິຕ້ອງ
ຖືກຂ້າຖວາຍ
22:8 ແລ້ວໃນມື້ນັ້ນ ພຣະເຢຊູ ໄດ້ບອກ ເປໂຕ ກັບ ໂຢຮັນ ວ່າ “ໃຫ້ໄປຈັດກຽມແນວ
ກິນໄວ້ໃຫ້ພວກເຮົາກິນສະຫລອງກັນເດີ້”
22:9 ເຂົາຖາມເພິ່ນວ່າ “ອາຈານຊິໃຫ້ຈັດຢູ່ໃສ”
22:10 ພຣະເຢຊູ ເລີຍບອກເຂົາວ່າ “ນີ້ແຫລະ ບັດພວກເຈົ້າເຂົ້າໄປໃນເມືອງ ຊິພໍ້
ຜູ້ຊາຍຜູ້ໜຶ່ງຖືໄຫນໍ້າມາ ໃຫ້ເຈົ້າໄປນໍາ ລາວ ເດີ້ ລາວ ໄປເຮືອນໃດກໍໃຫ້ໄປນໍາ
ລາວ ໂລດ
22:11 ແລ້ວໃຫ້ເຈົ້າເວົ້າກັບເຈົ້າຂອງເຮືອນນັ້ນວ່າ ‘ອາຈານຂອງເຮົາໃຫ້ມາຖາມ
ເຈົ້າວ່າ ຫ້ອງພັກແຂກທີ່ເພິ່ນຊິກິນລ້ຽງສະຫລອງມື້ກູ້ຊາດກັບລູກສິດຂອງເພິ່ນຢູ່
ໃສ’
22:12 ແລ້ວເຂົາຊິພາພວກເຈົ້າຂຶ້ນໄປເບິ່ງຫ້ອງໃຫຍ່ຢູ່ຊັ້ນເທິງ ທີ່ຕົກແຕ່ງໄວ້ແລ້ວ
ໃຫ້ພວກເຈົ້າຈັດກຽມໄວ້ຢູ່ຫັ້ນເດີ້”
22:13 ແລ້ວພໍພວກເຂົາເຂົ້າໄປໃນເມືອງ ເຂົາໄດ້ຮັບຕາມຄວາມເວົ້າທີ່ ພຣະເຢຊູ
ບອກໄວ້ນັ້ນ ແລ້ວເຂົາກໍເລີຍຈັດກຽມໄວ້ເພື່ອລ້ຽງສະຫລອງມື້ກູ້ຊາດໃນຫ້ອງນັ້ນ
22:14 ພໍຮອດຍາມສະຫລອງແລ້ວ ພຣະເຢຊູ ໄດ້ນັ່ງຮ່ວມໂຕະກິນກັບພວກທູດພິ-
ເສດສິບສອງຄົນນັ້ນ
22:15 ແລ້ວເພິ່ນເວົ້າກັບເຂົາວ່າ “ເຮົານີ້ຮ້ອນຮົນໃຈຫລາຍທີ່ຊິຮ່ວມໂຕະກິນສະ-
ຫລອງກັນກັບພວກເຈົ້າໃນມື້ນີ້ ກ່ອນເຮົາຊິຖືກທໍລະມານ
22:16 ‘ຄື ເຮົາບອກພວກເຈົ້າວ່າ ເຮົາຊິບໍ່ໄດ້ກິນສະຫລອງນີ້ອີກຈົນກວ່າຊິສໍາເລັດ
ຜົນຢູ່ໃນລາຊະອານາຈັກຂອງພຣະເຈົ້າພູ້ນ’

22:17 ພໍເວົ້າແລ້ວ ພຣະເຢຊູ ໄດ້ຮັບຈອກໄວ້ ຂອບໃຈພຣະເຈົ້າແລ້ວຈັ່ງຍື່ນໃຫ້
ລູກສິດ ບອກວ່າ 'ຮັບເອົາຊະ ປັນກັນດື່ມເດີ້'
22:18 ຄືເຮົາບອກພວກເຈົ້າວ່າ ເຮົາຊິບໍ່ໄດ້ດື່ມເຫລົ້າອະງຸ່ນນີ້ອີກຈົນກວ່າລາຊະ-
ອານາຈັກຂອງພຣະເຈົ້າຊິມາຕັ້ງ"
22:19 ເວົ້າແລ້ວ ພຣະເຢຊູ ກໍຮັບກ້ອນເຂົ້າຈີ່ຂຶ້ນມາ ຂອບໃຈພຣະເຈົ້າແລ້ວຈັ່ງຫັກ
ເປັນປ່ຽງ ຍື່ນໃຫ້ພວກລູກສິດ ແລ້ວບອກເຂົາວ່າ "ນີ້ເວົ້າເຖິງໂຕຂອງເຮົາ ໃຫ້ກິນ
ເປັນທີ່ລະນຶກເຖິງເຮົາເດີ້"
22:20 ແລ້ວໃນທຳນອງດຽວກັນ ພຣະເຢຊູ ໄດ້ຮັບເອົາຈອກຂຶ້ນມາ ຂອບໃຈພຣະ-
ເຈົ້າແລ້ວຍື່ນໃຫ້ລູກສິດ ເວົ້າວ່າ "ຈອກ *ເຫລົ້າອະງຸ່ນ* ນີ້ ເວົ້າເຖິງຄຳສັນຍາໃໝ່ຊຶ່ງ
ເປັນເລືອດຂອງເຮົາທີ່ຊິໄຫລອອກເພື່ອພວກເຈົ້າ
22:21 ແຕ່ ນີ້ແຫລະ ມືຂອງຜູ້ທີ່ຊິທໍລະຍົດເຮົານັ້ນພວມວາງລົງໃສ່ໂຕະດຽວກັນກັບ
ເຮົາຢູ່ດຽວນີ້
22:22 ແທ້ຈິງແລ້ວ ເຮົາຜູ້ເປັນບຸດມະນຸດຕ້ອງເສຍຊີວິດໄປຕາມແຜນງານທີ່ *ພຣະ-*
*ເຈົ້າ* ມີໄວ້ຢູ່ແລ້ວ ແຕ່ລະວັງພິນາດເດີ້ ຜູ້ທີ່ຊິທໍລະຍົດເຮົາ"
22:23 ບັດນີ້ ພວກລູກສິດເລີ່ມຖາມກັນເຖິງວ່າ ຜູ້ໃດໃນພວກເຂົາຊິເຮັດຈັ່ງຊັ້ນ
22:24 ແລ້ວຫວ່າງນັ້ນ ໄດ້ເກີດການໂຕ້ຖຽງລະຫວ່າງກັນວ່າ ຜູ້ໃດໃນພວກເຂົາຊິ
ເປັນໃຫຍ່ເປັນໂຕ
22:25 ພຣະເຢຊູ ເລີຍບອກເຂົາວ່າ ແທ້ຈິງແລ້ວ ພວກກະສັດໃຊ້ອຳນາດເໜືອປະ-
ຊາຊົນ ແລ້ວຜູ້ທີ່ຖືອຳນາດເໜືອເຂົານັ້ນເອີ້ນວ່າ ຜູ້ມີບຸນຄຸນ
22:26 ແຕ່ສຳລັບພວກເຈົ້ານີ້ ມັນຊິບໍ່ເປັນແນວນັ້ນເລີຍ ຄືຜູ້ທີ່ຊິເປັນໃຫຍ່ເປັນໂຕ
ໃນພວກເຈົ້າ ກໍໃຫ້ເຂົາຖ່ອມໂຕເປັນຜູ້ນ້ອຍໆ ແລ້ວຜູ້ທີ່ຊິເປັນຜູ້ນຳຕ້ອງເປັນຜູ້
ຮັບໃຊ້ໝູ່
22:27 *ເຮົາຖາມ* ໃຜຊິເປັນໃຫຍ່ວ່າກັນ ຜູ້ນັ່ງໂຕະຫລືຜູ້ຢາງໂຕະ ຕາມທຳມະດາ
ເປັນຜູ້ນັ່ງໂຕະແມ່ນບໍ່ ແຕ່ສ່ວນເຮົາທີ່ມານຳພວກເຈົ້າຢູ່ນີ້ ເປັນຜູ້ຢາງໂຕະ
22:28 ແລ້ວພວກເຈົ້ານີ້ກໍເປັນໝູ່ຮ່ວມທຸກຮ່ວມສຸກໃນການທົດລອງກັບເຮົາມາຕະ-
ຫລອດ

22:29 ແລ້ວເຮົາຊິມອບລາຊະອານາຈັກນັ້ນໄວ້ກັບພວກເຈົ້າ ຄືກັນກັບພຣະເຈົ້າ ຜູ້
ເປັນພໍ່ເຮົາ ໄດ້ມອບໄວ້ໃຫ້ເຮົາ
22:30 ເພື່ອເຈົ້າຊິໄດ້ຮ່ວມໂຕະດຽວກັນກິນດື່ມກັບເຮົາຢູ່ລາຊະອານາຈັກນັ້ນ ກັບນັ່ງ
ບັນລັງພິພາກສາພວກອິດສະຣາເອັນສິບສອງເຜົ່າ
22:31 ແລ້ວ ພຣະເຢຊູ ເວົ້າວ່າ " ຊີໂມນເປໂຕ ເອີຍ ສຳລັບເຈົ້ານີ້ ພະຍາມານ ຊາ-
ຕານໄດ້ຂໍອະນຸຍາດຢາກທົດລອງເຈົ້າຄືຝັດເຂົ້າຮ່ອນໄປຮ່ອນມາຢູ່ຫັ້ນ
22:32 ແຕ່ວ່າເຮົາໄດ້ວອນຂໍຕໍ່ພຣະເຈົ້າແລ້ວ ເພື່ອຄວາມເຊື່ອຂອງເຈົ້າຊິບໍ່ລົ້ມເຫ
ລວໄປ ແລ້ວບັດເຈົ້າຫັນມາຫາເຮົາອີກ ກໍໃຫ້ເຈົ້າຊ່ອຍຊູກຳລັງພີ່ນ້ອງເດີ້"
22:33 ແຕ່ເຂົາເລີຍເວົ້າກັບ ພຣະເຢຊູ ຢືນຢັນວ່າ "ໂອ່ອາຈານເອີຍ ຜູ້ຂ້າພ້ອມທີ່ຊິ
ເຂົ້າຄຸກນຳ ຕາຍກໍຊິຍອມຕາຍນຳ"
22:34 ແຕ່ ພຣະເຢຊູ ເວົ້າວ່າ " ເປໂຕ ເອີຍ ເຮົາຊິບອກເຈົ້າ ກ່ອນໄກ່ຂັນຂ້ອນຊິແຈ້ງ
ເຈົ້າຊິປະຕິເສດສາມເທື່ອວ່າບໍ່ຮູ້ຈັກເຮົາເລີຍ"
22:35 ແລ້ວ ພຣະເຢຊູ ໄດ້ຖາມພວກລູກສິດເບິ່ງວ່າ "ຕອນທີ່ເຮົາໄດ້ສົ່ງພວກເຈົ້າ
ອອກໄປມືບໍ່ນັ້ນ ພວກເຈົ້າໄດ້ຂາດອີຫຍັງບໍ້" ພວກລູກສິດຕອບວ່າ "ບໍ່ໄດ້ຂາດອີ-
ຫຍັງເລີຍ"
22:36 ແລ້ວ ພຣະເຢຊູ ບອກເຂົາວ່າ "ເທື່ອນີ້ຜູ້ໃດມີເງິນມີຫຍັງກໍໃຫ້ຫໍ່ໄປນຳ ໂລດ
ກັບຄົນໃຜບໍ່ມີດາບກໍໃຫ້ຂາຍເສື້ອຄຸມໄປຊື້ເອົາເດີ້
22:37 ຄືເຮົາບອກພວກເຈົ້າວ່າ ຄູ່ອັນຄູ່ແນວທີ່ມີຂຽນໄວ້ໃນ ພຣະຄຳ ທີ່ເວົ້າເຖິງເຮົາ
ນັ້ນກໍຕ້ອງສຳເລັດໃຫ້ໝົດ ແລ້ວມີແນວໜຶ່ງທີ່ມີຂຽນໄວ້ທີ່ຍັງບໍ່ທັນເປັນໄປ ຄື 'ຜູ້-
ນັ້ນນັບວ່າເປັນຜູ້ຜິດກົດໝາຍ'"
22:38 ແລ້ວລູກສິດເວົ້າວ່າ "ນີ້ເດ ອາຈານເອີຍ ມີດາບຢູ່ສອງປົ້ມ" ພຣະເຢຊູ ບອກ-
ວ່າ "ນີ້ກໍພໍແລ້ວ"
22:39 ແລ້ວ ພຣະເຢຊູ ອອກຈາກໜ້ອງນັ້ນ ຂຶ້ນໄປພູໝາກກອກເທດໜ້ອງເຄີຍໄປ
ແລ້ວພວກລູກສິດກໍຕາມເພິ່ນໄປ
22:40 ພໍໄປຮອດແລ້ວ ພຣະເຢຊູ ເຕືອນພວກລູກສິດວ່າ "ໃຫ້ວອນຂໍຕໍ່ພຣະເຈົ້າໄວ້
ເດີ້ ເພື່ອຊິບໍ່ເຂົ້າສູ່ການທົດລອງ"

22:41 ແລ້ວ ພຣະເຢຊູ ກໍຍ່າງອອກຈາກເຂົາໄປປະມານລະຍະຂວ້າງຫີນຕົກ ນັ່ງ
ຄຸກເຂົ່າລົງເວົ້ານໍາພຣະເຈົ້າຢູ່ຫັ້ນ
22:42 ວ່າ “ພໍ່ເອີຍ ຖ້າມີທາງອື່ນທີ່ເປັນໄປໄດ້ຕາມຈຸດປະສົງຂອງພໍ່ ລູກຂໍໃຫ້ພໍ່ເອົາ
ຈອກນີ້ອອກຈາກລູກໄປ ຈັ່ງໃດກໍຕາມ ຖ້າບໍ່ໄດ້ ຂໍໃຫ້ເປັນໄປຕາມຈຸດປະສົງຂອງ
ພໍ່ ບໍ່ແມ່ນຈຸດປະສົງຂອງລູກ”
22:43 ບັດນີ້ ມີເທວະທູດອົງໜຶ່ງລົງມາຢູ່ນໍາ ພຣະເຢຊູ ຊ່ອຍຊູກໍາລັງໃຫ້ເພິ່ນ
22:44 ແລ້ວຕອນ ພຣະເຢຊູ ພວມໄຫວ້ວອນຢູ່ຫັ້ນ ເພິ່ນອຸກອັ່ງທຸກຮ້ອນໃນໃຈ
ຫລາຍຈົນເຫື່ອໄຫລຢາດລົງໃສ່ດິນຄືເລືອດ
22:45 ແລ້ວບັດ ພຣະເຢຊູ ລຸກຂຶ້ນຈາກການໄຫວ້ວອນ ພໍໄປຮອດລູກສິດ ເຫັນວ່າ
ເຂົານອນຫລັບຢູ່ຍ້ອນເຂົາມີຄວາມໂສກເສົ້າຫລາຍ
22:46 ເພິ່ນເລີຍບອກພວກເຂົາວ່າ “ເປັນຫຍັງພວກເຈົ້ານອນຫລັບຢູ່ ລຸກຂຶ້ນໄຫວ້
ວອນຕໍ່ພຣະເຈົ້າເພື່ອຊິບໍ່ເຂົ້າໃນການທົດລອງ”
22:47 ແລ້ວພໍ ພຣະເຢຊູ ເວົ້າຍັງບໍ່ທັນຂາດຄໍາຊໍ້າ ມີພວກຄົນແຫ່ກັນມາ ແລ້ວຜູ້ທີ່
ນໍາໜ້າພວກເຂົາຄື ຢູດາ ເປັນຜູ້ໜຶ່ງໃນລູກສິດສິບສອງຄົນນັ້ນ ພໍມາເຖິງ ພຣະ-
ເຢຊູ ຢູດາ ກໍເຂົ້າໄປຈູບແກ້ມຂອງເພິ່ນ
22:48 ແຕ່ ພຣະເຢຊູ ຖາມເຂົາວ່າ “ ຢູດາ ເອີຍ ເຈົ້າມາທໍລະຍົດເຮົາຜູ້ເປັນບຸດມະ-
ນຸດດ້ວຍການຈູບແກ້ມຊັ້ນບໍ້”
22:49 ບັດພໍພວກລູກສິດຢູ່ນັ້ນເຫັນທ່າບໍ່ດີທີ່ຊິເກີດຂຶ້ນນັ້ນ ເຂົາຖາມເພິ່ນວ່າ “ອາ-
ຈານເອີຍ ຊິໃຫ້ພວກຜູ້ຂ້າໃຊ້ດາບແຂ້ວບໍ້”
22:50 ບັດນີ້ລູກສິດຜູ້ໜຶ່ງກໍຊັກດາບອອກມາແຂ້ວໃສ່ພວກຄົນທີ່ມາຈັບ ພຣະເຢຊູ
ຖືກຫູຂວາຄົນໃຊ້ຂອງມະຫາປະໂລຫິດໃຫ້ຂາດໄປ
22:51 ພຣະເຢຊູ ເລີຍບອກວ່າ “ຂໍຊັກຢ່າງດຽວ” ແລ້ວກໍຍື່ນມືແຕະຫູນັ້ນ ມັນເລີຍ
ເຊົາເປັນດີຄືເກົ່າ
22:52 ແລ້ວ ພຣະເຢຊູ ເວົ້າກັບພວກຫົວໜ້າປະໂລຫິດ ກັບພວກຫົວໜ້າກອງເວນ
ຖືຮັກສາພຣະວິຫານ ກັບພວກຜູ້ນໍາຂອງບ້ານເມືອງ ທີ່ພາກັນມາຈັບເພິ່ນ ວ່າ
“ພວກເຈົ້າຄຶດວ່າຊິມາຈັບໂຈນຜູ້ຮ້າຍບໍ້ ຄືຖືດາບຖືຄ້ອນມາ

22:53 ຕອນເຮົາເຄີຍຢູ່ກັບພວກເຈົ້າໃນພຣະວິຫານຢູ່ຄູ່ມື້ນັ້ນ ເປັນຫຍັງພວກເຈົ້າຄື
ບໍ່ໄດ້ຫາຈັບເຮົາຕອນນັ້ນ ແຕ່ໂມງນີ້ເປັນໂມງຂອງພວກເຈົ້າ ກັບໂມງຂອງອຳ-
ນາດແຫ່ງຄວາມມືດນຳ”
22:54 ພໍພວກເຂົາຈັບ ພຣະເຢຊູ ແລ້ວກໍນຳເພິ່ນໄປເຮືອນຂອງມະຫາປະໂລຫິດ
ສ່ວນ ເປໂຕ ກໍໄດ້ຕາມໄປຫ່າງໆ
22:55 ພໍພວກເຂົາໄດ້ດັງໄຟຢູ່ບໍລິເວນເດີ່ນເຮືອນ ແລ້ວນັ່ງຜີງໄຟນຳກັນ ເປໂຕ ກໍ
ເລີຍໄປຜີງນຳເຂົາ
22:56 ແລ້ວມີສາວໃຊ້ຜູ້ໜຶ່ງ ພໍເຫັນ ເປໂຕ ນັ່ງຜີງໄຟ ເວົ້າຂຶ້ນວ່າ “ຜູ້ນີ້ເນາະເຄີຍຢູ່
ນຳ ພຣະເຢຊູ ”
22:57 ແຕ່ ເປໂຕ ປະຕິເສດວ່າ “ຍິງເອີຍ ຂ້ອຍບໍ່ຮູ້ຈັກເຂົາ”
22:58 ຢູ່ມາອີກຈັກໜ່ອຍ ມີຜູ້ຊາຍຜູ້ໜຶ່ງທັ້ວງ ເປໂຕ ວ່າ “ເຈົ້າເປັນພວກ ພຣະເຢຊູ
ຄືກັນ” ແຕ່ ເປໂຕ ປະຕິເສດວ່າ “ບໍ່ແມ່ນ ອ້າຍເອີຍ”
22:59 ຢູ່ອີກປະມານຊົ່ວໂມງໜຶ່ງ ມີຜູ້ຊາຍຜູ້ໜຶ່ງເວົ້າຂຶ້ນມາຢ່າງໝັ້ນໃຈວ່າ “ແຕ່ແທ້
ແລ້ວ ຄົນນີ້ເຄີຍໄດ້ຢູ່ກັບຜູ້ນັ້ນ ຍ້ອນວ່າເຂົາເປັນຄົນ ກາລີເລ ”
22:60 ແຕ່ ເປໂຕ ໄດ້ປະຕິເສດອີກວ່າ “ນາຍເອີຍ ຂ້ອຍບໍ່ຮູ້ເລື່ອງທີ່ເຈົ້າເວົ້ານີ້” ເປ-
ໂຕ ເວົ້າຍັງບໍ່ຂາດຄຳຊໍ້າ ໄກ່ກໍຂັນ ໂລດ
22:61 ແລ້ວ ພຣະເຢຊູ ກໍຫລຽວເບິ່ງ ເປໂຕ ພໍເບິ່ງແລ້ວ ເປໂຕ ເລີຍຄຶດຊອດຄຳ
ເວົ້າຂອງເພິ່ນ ຕາມທີ່ເຄີຍບອກເຂົາວ່າ “ກ່ອນໄກ່ຊິຂັນນັ້ນ ເຈົ້າຊິປະຕິເສດວ່າບໍ່
ຮູ້ຈັກເຮົາສາມເທື່ອ”
22:62 ແລ້ວ ເປໂຕ ເລີຍອອກໄປຮ້ອງໄຫ້ເສຍໃຈຢ່າງແຮງ
22:63 ບັດນີ້ພວກຄົນທີ່ຄຸມໂຕ ພຣະເຢຊູ ໄວ້ ໄດ້ພາກັນເວົ້າດູຖູກຄຽ້ນຕີເພິ່ນຢູ່ນັ້ນ
22:64 ແລ້ວພໍເອົາຜ້າປິດຕາ ພຣະເຢຊູ ໄວ້ແລ້ວ ເຂົາຖາມເພິ່ນວ່າ “ໃຫ້ທາຍມາ
ໂລດ ວ່າໃຜເປັນຜູ້ຕີເຈົ້າ”
22:65 ກັບພວກເຂົາໄດ້ເວົ້າລົບຫລູ່ດູໝິ່ນເພິ່ນເປັນຫລາຍອັນຫລາຍແນວ
22:66 ພໍແຈ້ງຂຶ້ນມາແລ້ວ ພວກຜູ້ນຳຂອງບ້ານເມືອງ ກັບພວກຫົວໜ້າປະໂລຫິດ
ກັບພວກນັກທຳໄດ້ມາຮ່ວມກັນເປັນຄະນະກຳມະການສານ ຈັ່ງເວົ້າວ່າ

22:67 “ຄັ່ນເຈົ້າເປັນ ພຣະຄຣິດ ນັ້ນ ໃຫ້ບອກມາແມ້” ແຕ່ ພຣະເຢຊູ ຕອບເຂົາວ່າ
“ຄັ່ນວ່າເຮົາບອກພວກເຈົ້າ ພວກເຈົ້າຊິບໍ່ຍອມເຊື່ອເດັດຂາດ
22:68 ແລ້ວຄັ່ນເຮົາຖາມພວກເຈົ້າ ພວກເຈົ້າຄືຊິບໍ່ຍອມຕອບ ຫລືປ່ອຍເຮົາໄປ
22:69 ແຕ່ໃຫ້ຮູ້ວ່າ ຕັ້ງແຕ່ນີ້ໄປເຮົາຜູ້ເປັນບຸດມະນຸດ ຊິນັ່ງຢູ່ທາງຂວາຂອງພຣະ-
ເຈົ້າຮັບມອບອຳນາດຈາກເພິ່ນ”
22:70 ແລ້ວພວກເຂົາຖາມວ່າ “ຄັ່ນຈັ່ງຊັ່ນ ເຈົ້າເປັນ ພຣະບຸດ ຂອງພຣະເຈົ້າແມ່ນ
ບໍ້” ພຣະເຢຊູ ຕອບວ່າ “ແມ່ນແລ້ວ ເຮົາໄດ້ເປັນຕາມທີ່ເຈົ້າເວົ້ານັ້ນ”
22:71 ບັດນີ້ພວກເຂົາເວົ້າກັນວ່າ “ພວກເຮົາຕ້ອງການຄຳພະຍານຫຍັງອີກບໍ້ ຄື
ພວກເຮົາເອງໄດ້ຍິນເຂົາຮັບປາກພໍແຮງແລ້ວ”

## ລູກາ ບົດທີ 23

23:1 ແລ້ວພວກເຂົາທັງໝົດກໍລຸກຂຶ້ນນຳເອົາ ພຣະເຢຊູ ໄປຫາ ປີລາດ *ຜູ້ກຳກັບ
ທະຫານ ໂຣມ ນັ້ນ*
23:2 ແລ້ວພວກເຂົາກໍເລີ່ມຟ້ອງຮ້ອງໃສ່ ພຣະເຢຊູ ຕໍ່ ປີລາດ ວ່າ “ພວກເຮົາພໍ້ຄົນນີ້
ພວມຍຸຍົງເປົ່າຫູປະຊາຊົນ ກັບຫ້າມບໍ່ໃຫ້ເສຍພາສີໃຫ້ຈັກກະພັດ ກາຍຊາ ແລ້ວ
ເຂົາຍັງຫາວ່າໂຕເອງເປັນກະສັດ”
23:3 ປີລາດ ເລີຍຖາມ ພຣະເຢຊູ ວ່າ “ເຈົ້າເປັນກະສັດຂອງພວກຢິວອົງນັ້ນບໍ້”
ພຣະເຢຊູ ຕອບວ່າ “ແມ່ນແລ້ວ ຕາມທີ່ນາຍເວົ້າ”
23:4 ພຣະເຢຊູ ເວົ້າແລ້ວ ປີລາດ ໄດ້ບອກພວກຫົວໜ້າປະໂລຫິດ ກັບພວກປະ-
ຊາຊົນຢູ່ນັ້ນວ່າ “ເຮົາບໍ່ເຫັນວ່າຜູ້ນີ້ມີຄວາມຜິດອີຫຍັງ”
23:5 ແຕ່ພວກເຂົານັ້ນໄດ້ເວົ້າແຂງຂຶ້ນກວ່າເກົ່າວ່າ “ຜູ້ນີ້ເຮັດໃຫ້ປະຊາຊົນເກີດ
ຄວາມວຸ້ນວາຍ ສອນຢູ່ທົ່ວເຂດ ຢູດາຍ ເລີ່ມແຕ່ເມືອງ ກາລີເລ ຈົນມາຮອດຢູ່ພີ້
ແລ້ວ”
23:6 ພໍ ປີລາດ ໄດ້ຍິນວ່າ ພຣະເຢຊູ ເລີ່ມສັ່ງສອນຢູ່ເມືອງ ກາລີເລ ກໍຖາມວ່າເພິ່ນ
ເປັນຄົນ ກາລີເລ ບໍ້

23:7 ແລ້ວພໍ ປີລາດ ຮູ້ຈັກວ່າ ພຣະເຢຊູ ເປັນຄົນ ກາລີເລ ເຂດປົກຄອງຂອງພະຍາ
ເຮໂຣດ  ປີລາດ ກໍບອກໃຫ້ເຂົານຳເພິ່ນໄປຫາພະຍາ ເຮໂຣດ ທີ່ຢູ່ໃນເມືອງ ເຢຣູ-
ຊາເລັມ ຕອນນັ້ນ
23:8 ບັດນີ້ ພໍພະຍາ ເຮໂຣດ ເຫັນເຂົານຳ ພຣະເຢຊູ ມາຫາກໍດີໃຈຢ່າງໃຫຍ່ ຍ້ອນ
ວ່າເຄີຍໄດ້ຍິນຊື່ສຽງຂອງ ພຣະເຢຊູ ຄິດຢາກພໍ້ເພິ່ນແຕ່ດົນນານ ຫວັງວ່າ ພຣະ-
ເຢຊູ ຊິເຮັດການອັດສະຈັນໃຫ້ເຫັນ
23:9  ເຮໂຣດ ເລີຍສອບຖາມ ພຣະເຢຊູ ຫລາຍອັນຫລາຍແນວ ແຕ່ວ່າ ພຣະເຢຊູ
ບໍ່ໄດ້ຕອບອີຫຍັງເລີຍ
23:10 ແລ້ວພວກຫົວໜ້າປະໂລຫິດ ກັບພວກນັກທຳໄດ້ຢືນຂຶ້ນ ພ້ອມກັນກ່າວຫາ
ໃສ່ ພຣະເຢຊູ ຢ່າງຮຸນແຮງ
23:11 ແລ້ວພະຍາ ເຮໂຣດ ພ້ອມພວກທະຫານຂອງເຂົາ ໄດ້ດູຖູກເຍາະເຍີ້ຍໃສ່
ພຣະເຢຊູ  ກັບເອົາເສື້ອຄຸມສີມ່ວງມາໃສ່ ແລ້ວສົ່ງເພິ່ນຄືນໄປຫາ ປີລາດ
23:12 ຕັ້ງແຕ່ມື້ນັ້ນມາ ປີລາດ ກັບ ເຮໂຣດ ໄດ້ຄືນດີເປັນໝູ່ກັນ ຄືວ່າເຂົາບໍ່ຖືກກັນ
ມາກ່ອນ
23:13 ພໍສົ່ງມາຮອດ ປີລາດ ແລ້ວ  ປີລາດ ໄດ້ເອີ້ນພວກຫົວໜ້າປະໂລຫິດ ກັບ
ພວກຜູ້ນຳຂອງບ້ານເມືອງ ພ້ອມກັບພວກປະຊາຊົນມາຮ່ວມກັນ
23:14 ແລ້ວ ປີລາດ ໄດ້ປະກາດວ່າ “ທີ່ພວກເຈົ້ານຳຜູ້ນີ້ມາຫາເຮົາ ແລ້ວຫາວ່າເປັນ
ຜູ້ເຮັດໃຫ້ປະຊາຊົນຫລົງຜິດອອກໄປນອກຮອຍນອກທາງ ແລ້ວຕາມທີ່ເຮົາໄດ້
ສອບຖາມຕໍ່ໜ້າພວກເຈົ້ານັ້ນ ເຮົາບໍ່ເຫັນວ່າຜູ້ນີ້ມີຄວາມຜິດອີຫຍັງຕາມຄະດີທີ່
ພວກເຈົ້າຟ້ອງມານັ້ນ
23:15 ແລ້ວແມ່ນແຕ່ພະຍາ ເຮໂຣດ  ລາວກໍບໍ່ເຫັນວ່າຜູ້ນີ້ມີຄວາມຜິດອີຫຍັງຄືກັນ
ຕອນເຮົາສົ່ງພວກເຈົ້າຄືນໄປໃຫ້ ລາວ ນັ້ນ ແທ້ຈິງແລ້ວ ຜູ້ນີ້ບໍ່ໄດ້ເຮັດຜິດຫຍັງທີ່
ສົມຄວນຊິຖືກປະຫານຊີວິດ
23:16 ຈັ່ງຊັ່ນເຮົາຊິລົງໂທດເຂົາຈັກໜ່ອຍແລ້ວກໍປ່ອຍເຂົາໄປ”
23:17 ( ປີລາດ ເວົ້າຈັ່ງຊີ້ຍ້ອນວ່າມີການປ່ອຍນັກໂທດຜູ້ໜຶ່ງ ໃຫ້ກົງກັບມື້ສະຫລອງ
ກູ້ຊາດ)

23:18 ແຕ່ວ່າພວກປະຊາຊົນຮ້ອງຂຶ້ນພ້ອມກັນວ່າ “ໃຫ້ຈັດການຄົນຜູ້ນີ້ໄປເລີຍ
ແລ້ວປ່ອຍນາຍ ບາຣາບາ ອອກມາໃຫ້ພວກເຮົາເດີ້”
23:19 ບາຣາບາ ນັ້ນ ຕິດຄຸກຍ້ອນເຂົາມີຄະດີປຸກລະດົມຢູ່ໃນເມືອງ ກັບໄດ້ຂ້າຄົນ
23:20 ຄືເປັນວ່າ ປີລາດ ຄິດຢາກປ່ອຍ ພຣະເຢຊູ ເລີຍຮຽກຮ້ອງເຂົາອີກ
23:21 ແຕ່ພວກເຂົາພາກັນຮ້ອງຂຶ້ນວ່າ “ຕອກຄຶງປະຫານເຂົາ ໂລດ ໆ”
23:22 ບັດນີ້ ປີລາດ ເວົ້າກັບເຂົາອີກເປັນເທື່ອທີ່ສາມວ່າ “ຕອກຄຶງປະຫານເຮັດ
ຫຍັງເຮົາບໍ່ເຫັນວ່າເຂົາມີຄວາມຜິດອີຫຍັງ ຈັ່ງຊັ້ນເຮົາຊິລົງໂທດຈັກໜ່ອຍແລ້ວ
ປ່ອຍເຂົາໄປ”
23:23 ແຕ່ພວກຄົນຢູ່ນັ້ນບໍ່ຍອມ ແຮງພາກັນຮ້ອງດັງຂຶ້ນວ່າໃຫ້ເອົາ ພຣະເຢຊູ ໄປ
ຕອກຄຶງ ແລ້ວສຽງເວົ້າຂອງພວກຄົນ ກັບຂອງພວກຫົວໜ້າປະໂລຫິດ ໄດ້ເອົາ
ຊະນະ
23:24 ປີລາດ ເລີຍຍອມຕັດສິນສັ່ງໃຫ້ປະຫານຊີວິດ ພຣະເຢຊູ ຕາມຄຳຂໍຮ້ອງຂອງ
ເຂົາ
23:25 ແລ້ວກໍປ່ອຍນັກໂທດ ບາຣາບາ ຕາມທີ່ເຂົາຂໍຮ້ອງນັ້ນ ຜູ້ຕິດຄຸກຍ້ອນຄະດີ
ການປຸກລະດົມ ກັບການຂ້າຄົນ ແລ້ວໄດ້ມອບ ພຣະເຢຊູ ໄວ້ຕາມໃຈຂອງພວກ-
ເຂົາ
23:26 ແລ້ວບັດພວກທະຫານ ໂຣມ ພວມຄຸມໂຕ ພຣະເຢຊູ ອອກໄປ ມີຜູ້ຊາຍຜູ້ໜຶ່ງ
ຊື່ ຊີໂມນ ຊາວ ກີເຣເນ ທີ່ພວມມາແຕ່ຊົນນະບົດ ລາວ ເລີຍຖືກບັງຄັບໃຫ້ຍົກ
ໄມ້ກາງແຂນໃສ່ບ່າ ແບກຕາມຫລັງ ພຣະເຢຊູ ໄປ
23:27 ແລ້ວມີຄົນຫລວງຫລາຍແຫ່ໄປນຳ ແລ້ວພວກແມ່ຍິງທີ່ພາກັນໄປຢູ່ນັ້ນກໍ
ເສຍໃຈຮ້ອງໄຫ້ນຳ ພຣະເຢຊູ
23:28 ພຣະເຢຊູ ເລີຍຫັນມາບອກແມ່ຍິງນັ້ນວ່າ “ລູກສາວຂອງເມືອງ ເຢຣູຊາເລັມ
ເອີຍ ຢ່າຮ້ອງໄຫ້ນຳເຮົາເລີຍ ໃຫ້ຮ້ອງໄຫ້ເພື່ອໂຕເອງ ກັບເພື່ອລູກຫລານຊະດີກ-
ວ່າ
23:29 ຍ້ອນວ່າຊິມີມື້ມາຮອດທີ່ພວກເຈົ້າຊິວ່າ ‘ແມ່ຍິງຜູ້ເປັນໝັນ ກັບມົດລູກທີ່ບໍ່
ເຄີຍອອກລູກ ພ້ອມທັງເຕົ້ານົມທີ່ບໍ່ເຄີຍລ້ຽງລູກ ກໍຊິໄດ້ພົບເປັນສຸກ’

23:30 ແລ້ວເຂົາຊິຂໍຕໍ່ພູເຂົາວ່າ ‘ຂໍໃຫ້ພັງລົງມາທັບໃສ່ເຮົາ’ ກັບຕໍ່ໂນນພູວ່າ ‘ຂໍໃຫ້
ປົກຄຸມເຮົາໄວ້’
23:31 ແລ້ວຂະໜາດພວກເຂົານັ້ນໄດ້ເຮັດແນວນີ້ໃນຍາມທີ່ໄມ້ສົດຂຽວດີ ມັນຊິເປັນ
ແນວໃດໃນຍາມແຫ້ງແລ້ງ”
23:32 ບັດນີ້ ມີນັກໂທດອີກສອງຄົນທີ່ຖືກນຳອອກໄປປະຫານຊີວິດພ້ອມກັບ ພຣະ-
ເຢຊູ
23:33 ບັດພວກທະຫານໄປຮອດໜ້ອງທີ່ເອີ້ນກັນວ່າ ກະໂຫລຫົວ ເຂົາກໍປະຫານ
ພຣະເຢຊູ ຢູ່ນັ້ນ ກັບນັກໂທດສອງຄົນໄວ້ຄົນລະຂ້າງເພິ່ນ
23:34 ແລ້ວ ພຣະເຢຊູ ໄຫວ້ວອນຕໍ່ພຣະເຈົ້າຜູ້ເປັນພໍ່ວ່າ “ພໍ່ເອີຍ ກະລຸນາຍົກໂທດ
ໃຫ້ເຂົາແໜ່ ຍ້ອນວ່າເຂົາບໍ່ຮູ້ຈັກເຖິງແນວທີ່ເຂົາພວມເຮັດນີ້” ແລ້ວພວກທະຫານ
ໂຣມ ກໍພາກັນຈັບສະຫລາກ ແບ່ງເອົາເສື້ອຜ້າຂອງ ພຣະເຢຊູ
23:35 ຝ່າຍພວກຄົນ ເຂົາກໍມາຢືນເບິ່ງເຫດການ ແຕ່ພວກຜູ້ນຳຂອງບ້ານເມືອງກໍ-
ພາກັນເຍາະເຍີ້ຍເວົ້າໃສ່ ພຣະເຢຊູ ວ່າ “ຄັ່ນຜູ້ນີ້ເປັນພຣະຜູ້ໂຜດທີ່ພຣະເຈົ້າແຕ່ງ
ຕັ້ງນັ້ນອີຫລີ ກໍໃຫ້ຊ່ອຍໂຕເອງແບບທີ່ເຄີຍຊ່ອຍປະຊາຊົນເອົາ ໂລດ ”
23:36 ຝ່າຍພວກທະຫານ ໂຣມ ເຂົາກໍເຍາະເຍີ້ຍໃສ່ ພຣະເຢຊູ ແລ້ວເອົາເຫລົ້າ-
ອະງຸ່ນສົ້ມມາໃຫ້ເພິ່ນ
23:37 ກັບໄດ້ເວົ້າວ່າ “ຄັ່ນເຈົ້າເປັນກະສັດຂອງພວກຢິວອີຫລີນັ້ນ ກໍໃຫ້ຊ່ອຍໂຕ
ເອງໃຫ້ລອດ”
23:38 ຢູ່ເທິງຫົວ ພຣະເຢຊູ ນັ້ນກໍມີທາຕິດໄວ້ປະກາດຄະດີວ່າ “ຜູ້ນີ້ເປັນກະສັດ
ຂອງຊົນຊາດ ຢິວ ”
23:39 ນັກໂທດຜູ້ໜຶ່ງທີ່ຖືກຕອກຄຶງໄວ້ຢູ່ນັ້ນ ໄດ້ເວົ້າດູໝິ່ນໃສ່ ພຣະເຢຊູ ວ່າ “ຄັ່ນ
ເຈົ້າເປັນພຣະຜູ້ໂຜດນັ້ນອີຫລີກໍໃຫ້ຊ່ອຍໂຕເອງ ກັບພວກເຮົານຳ”
23:40 ແຕ່ນັກໂທດອີກຄົນໜຶ່ງນັ້ນ ໄດ້ເຕືອນໝູ່ວ່າ “ໂຢ້ວ ຂະໜາດພຣະເຈົ້າໂຕກໍ
ຍັງບໍ່ຢ້ານບໍ່ເກງເພິ່ນບໍ້ ທີ່ວ່າເຈົ້າມີຄະດີຕັດສິນລົງໂທດຄືກັນ
23:41 ຄືໂຕກັບເຮົາສົມຄວນຊິເປັນໂທດຈັ່ງຊີ້ຢູ່ແລ້ວ ແຕ່ວ່າຜູ້ນີ້ບໍ່ມີຄວາມຜິດອີ-
ຫຍັງເລີຍ”

23:42 ແລ້ວນັກໂທດນັ້ນເລີຍເວົ້າກັບ ພຣະເຢຊູ ວ່າ "ທ່ານເອີຍ ກະລຸນາຢ່າລືມຜູ້ຂ້າ
ທ້ອນ ບັດຍາມທ່ານຮັບມອບລາຊະອານາຈັກຂອງທ່ານ"
23:43 ແລ້ວ ພຣະເຢຊູ ບອກເຂົາວ່າ "ມື້ນີ້ເນາະ ເຈົ້າຊິໄດ້ໄປຢູ່ເມືອງບໍຣົມສຸກກັບ
ເຮົາ"
23:44 ຕອນນັ້ນປະມານທ່ຽງ ພໍດີຄວາມມືດປົກຄຸມຮອດທົ່ວແຜ່ນດິນຈົນເຖິງສາມ
ໂມງແລງ
23:45 ແລ້ວຕະເວັນກໍມືດໄປ ພໍດີຜ້າມ່ານທີ່ກັ້ນຫ້ອງສັກສິດຢູ່ໃນພຣະວິຫານກໍຖືກ
ຈີກອອກສູນກາງເປັນສອງທ່ອນ
23:46 ແລ້ວ ພຣະເຢຊູ ໄດ້ຮ້ອງຂຶ້ນສຽງດັ່ງວ່າ "ພໍ່ເອີຍ ລູກຂໍຝາກຈິດວິນຍານໄວ້ໃນ
ມືຂອງພໍ່ເດີ້" ເວົ້າແລ້ວເພິ່ນໄດ້ປ່ອຍລົມຫາຍໃຈສິ້ນສຸດອອກໄປ
23:47 ບັດນີ້ ນາຍຮ້ອຍທະຫານ ໂຣມ ທີ່ຄວບຄຸມການປະຫານນັ້ນ ພໍ ລາວ ໄດ້ເຫັນ
ແນວທີ່ເປັນໄປຫັ້ນ ລາວກໍຍອມຮັບສັນລະເສີນພຣະເຈົ້າວ່າ "ແທ້ຈິງແລ້ວ ຜູ້ນີ້
ເປັນຜູ້ບໍລິສຸດດີພ້ອມອີຫລີ"
23:48 ແລ້ວພວກປະຊາຊົນທີ່ແຫ່ກັນໄປເບິ່ງ ພໍໄດ້ເຫັນຈັ່ງຊັ້ນ ກໍພາກັນຕີອົກເສຍ-
ໃຈ ຫລົບເມືອບ້ານ
23:49 ແຕ່ໝູ່ພວກຂອງ ພຣະເຢຊູ ພ້ອມທັງແມ່ຍິງທີ່ຕາມເພິ່ນມາຈາກເມືອງ ກາລີ-
ເລ ກໍໄດ້ພາກັນຢືນເບິ່ງແຕ່ໄກໆ
23:50 ແລ້ວ ນີ້ແຫລະ ມີຜູ້ຊາຍຜູ້ໜຶ່ງຊື່ວ່າ ໂຢເຊບ ເປັນຄົນດີມີໃຈເປັນທຳ ກັບເປັນ
ກຳມະການຜູ້ໜຶ່ງໃນສານ
23:51 ລາວ ເປັນຄົນເມືອງ ອາຣີມາທາຍ ທີ່ເປັນເມືອງໜຶ່ງຂອງພວກຄົນ ຢິວ ເປັນ
ຜູ້ທີ່ຖ້າຮັບລາຊະອານາຈັກຂອງພຣະເຈົ້າ ແລ້ວເຂົາເອງ ເປັນຜູ້ຄັດຄ້ານ ບໍ່ໄດ້
ເຫັນດີເຫັນນຳກັບໝູ່ກຳມະການທີ່ຕັດສິນເອົາ ພຣະເຢຊູ ໄປປະຫານ
23:52 ໂຢເຊບ ຜູ້ນີ້ ໄດ້ໄປຂໍເອົາສົບຂອງ ພຣະເຢຊູ ກັບນາຍທະຫານ ປີລາດ
23:53 ແລ້ວ ລາວ ໄປເອົາສົບຂອງ ພຣະເຢຊູ ລົງຈາກໄມ້ກາງແຂນ ເອົາຜ້າປ່ານພັນ
ໄວ້ຢ່າງດີ ແລ້ວເອົາໄປໄວ້ໃນອຸບໂມງເຈາະໃໝ່ທີ່ບໍ່ເຄີຍໃສ່ສົບຂອງໃຜຈັກເທື່ອ
23:54 ພໍດີມື້ນັ້ນ ເປັນມື້ຈັດກຽມກ່ອນຊິຮອດມື້ພັກງານຂອງພວກຢິວ

23:55 ແລ້ວພວກແມ່ຍິງທີ່ໄດ້ຮັບໃຊ້ ພຣະເຢຊູ ຕັ້ງແຕ່ເພິ່ນອອກຈາກເມືອງ ກາລິ-
ເລ ມາ ໄດ້ໄປເບິ່ງອຸບໂມງ ສັງເກດການມ້ຽນສົບຂອງ ພຣະເຢຊູ ຢູ່ນັ້ນ
23:56 ແລ້ວພວກເຂົາຫລົບເມືອບ້ານໄປກຽມພວກເຄື່ອງຫອມກັບນ້ຳມັນຫອມແນວ
ຕ່າງໆ ໄວ້ ແລ້ວໄດ້ຢຸດໄວ້ໃນມື້ພັກງານຕາມຄຳສັ່ງໃນກົດບັນຍັດ

## ລູກາ ບົດທີ 24

24:1 ບັດນີ້ ຂ້ອນຊິແຈ້ງໃນມື້ແຣກຂອງອາທິດ ແມ່ຍິງພວກນັ້ນກໍພາກັນອອກໄປຫາ
ອຸບໂມງ ເອົາເຄື່ອງຫອມແນວຕ່າງໆ ທີ່ໄດ້ກຽມໄວ້ນັ້ນໄປນຳ
24:2 ພໍໄປຮອດແລ້ວ ເຂົາເຫັນວ່າ ແຜ່ນຫີນໃຫຍ່ທີ່ປິດປາກອຸບໂມງນັ້ນ ໄດ້ຖືກກິ້ງ
ອອກໄປແລ້ວ
24:3 ພໍບັດເຂົາເຂົ້າໄປບໍ່ໄດ້ຮັບໄດ້ເຫັນສົບຂອງ ພຣະເຢຊູ
24:4 ແລ້ວມັນເປັນໄປທີ່ວ່າ ບັດພໍພວມຢືນງຶງກັນຢູ່ນັ້ນ ນີ້ແຫລະ ໄດ້ມີຜູ້ຊາຍສອງ
ຄົນໃສ່ເສື້ອຜ້າເຫລື້ອມໆ ຢືນຢູ່ທາງຂ້າງເຂົາ
24:5 ພວກແມ່ຍິງກໍຕົກໃຈຢ້ານ ພາກັນກົ້ມໜ້າລົງດິນ ຜູ້ຊາຍສອງຄົນນັ້ນເວົ້າວ່າ
“ເປັນຫຍັງຄືມາຫາຜູ້ມີຊີວິດຢູ່ໃນໝ້ອງເກັບຄົນຕາຍ
24:6 ເພິ່ນບໍ່ຢູ່ນີ້ດອກ ຍ້ອນເປັນຂຶ້ນມາຈາກຕາຍແລ້ວ ຈື່ບໍ່ໄດ້ບໍ້ ທີ່ເພິ່ນເຄີຍບອກ
ພວກເຈົ້າຕອນຍັງຢູ່ເມືອງ ກາລີເລ ນັ້ນ
24:7 ວ່າ ‘ເຮົາຜູ້ເປັນບຸດມະນຸດຊິຖືກມອບໄວ້ໃນມືຂອງຄົນບາບ ແລ້ວຖືກຕອກຄຶງ
ໄວ້ ຊຶ່ງໃນມື້ທີ່ສາມເຮົາຊິເປັນຂຶ້ນມາອີກ’”
24:8 ບັດນີ້ ພວກເຂົາເລີຍຄຶດຊວດໃນຄວາມເວົ້າຂອງເພິ່ນ
24:9 ພວກເຂົາກໍເລີຍຫລົບເມືອໄປເລົ່າໝົດຄູ່ແນວໃຫ້ *ທູດພິເສດ* ສິບເອັດຄົນນັ້ນ
ຟັງ ກັບຄົນອື່ນໆ ຢູ່ນັ້ນນຳ
24:10 ໃນພວກແມ່ຍິງທີ່ໄປບອກທູດພິເສດນັ້ນ ມີ ມາຣິອາ ໄທເມືອງ ມັກດາລາ
ກັບ ໂຢອັນນາ ກັບ ມາຣິອາ ແມ່ຂອງ ຢາໂກໂບ ກັບແມ່ຍິງອີກຜູ້ລາງຄົນນຳ
24:11 ແຕ່ຄວາມເວົ້າຂອງພວກແມ່ຍິງນັ້ນ ສຳລັບທູດພິເສດຟັງແລ້ວຄືນິທານຊື່ໆ
ເລີຍບໍ່ເຊື່ອເຂົາ

24:12 ແຕ່ຝ່າຍ ເປໂຕ ກໍລຸກແລ່ນໄປອຸບໂມງ ກົ້ມລົງສ່ອງເຫັນແຕ່ຜ້າຫໍ່ສົບວາງຢູ່
ເລີຍຫລົບເມືອເຮືອນ ພວມງຶດໃນໃຈເຖິງແນວທີ່ເປັນໄປ
24:13 ແລ້ວ ນີ້ແຫລະ ໃນມື້ດຽວກັນນັ້ນ ມີລູກສິດສອງຄົນ ພວມໄປບ້ານ ເອມາອູດ
ຫ່າງຈາກເມືອງ ເຢຣູຊາເລັມ ປະມານສິບເອັດກິໂລ
24:14 ແລ້ວເຂົາພວມຊຸມກັນເຖິງຄູ່ແນວທີ່ເປັນໄປ
24:15 ພວມຊຸມພິຈາລະນາກັນຢູ່ນັ້ນ ພໍດີ ພຣະເຢຊູ ໄດ້ເຂົ້າໄປຂ້າງໆ ຍ່າງໄປນໍາ
ເຂົາ
24:16 ແຕ່ວ່າຕາຂອງເຂົາຖືກລັດໄວ້ ເລີຍເບິ່ງບໍ່ອອກ ບໍ່ຮູ້ວ່າເປັນ ພຣະເຢຊູ
24:17 ພຣະເຢຊູ ເລີຍຖາມເຂົາວ່າ “ຄືຍ່າງໄປແບບໂສກເສົ້າແທ້ ຊຸມກັນເລື່ອງຫຍັງ
ຢູ່ດຽວນີ້” ເຂົາກໍຢຸດຢືນໜ້າເສົ້າໆ
24:18 ແລ້ວຄົນໜຶ່ງຊື່ວ່າ ກະໂລປາ ເວົ້າກັບເພິ່ນວ່າ “ຣວ້າຍ ເຈົ້າເປັນແຂກຜູ້ດຽວ
ໃນເມືອງ ເຢຣູຊາເລັມ ນີ້ບໍ້ ທີ່ບໍ່ຮູ້ຈັກເລື່ອງທີ່ເກີດຂຶ້ນຫວ່າງສອງສາມມື້ນີ້”
24:19 ເພິ່ນເລີຍຖາມວ່າ “ແມ່ນເລື່ອງອີຫຍັງ” ເຂົາຕອບວ່າ “ກໍເລື່ອງ ພຣະເຢຊູ ໄທ-
ບ້ານ ນາຊາເຣັດ ນັ້ນເດ້ ຊຶ່ງເປັນປາກເປັນສຽງຂອງພຣະເຈົ້າຜູ້ມີພະລັງອໍານາດ
ອັນໃຫຍ່ຍິ່ງໃນຄວາມເວົ້າກັບການເຮັດຕໍ່ພຣະເຈົ້າ ກັບຕໍ່ພວກປະຊາຊົນນໍາ”
24:20 ແຕ່ພວກຫົວໜ້າປະໂລຫິດກັບພວກຜູ້ນໍາຂອງບ້ານເມືອງ ໄດ້ພາກັນກໍ່ຄະດີ
ມອບເພິ່ນໄວ້ໃຫ້ເຈົ້າໜ້າທີ່ຕອກຄຶງໃສ່ໄມ້ກາງແຂນ
24:21 ຄືພວກເຮົາຫວັງວ່າເພິ່ນຊິເປັນຜູ້ກູ້ຊາດ ອິສະຣາເອນ ເຮົາ ແຕ່ວ່າມື້ນີ້ເປັນມື້
ທີ່ສາມແລ້ວຕັ້ງແຕ່ເຫດການນັ້ນມາ
24:22 ແຕ່ເຮົາແປກໃຈຢູ່ຢ່າງໜຶ່ງ ຄືມື້ເຊົ້ານີ້ ແມ່ຍິງ ໄທ ພວກເຮົາຜູ້ລາງຄົນ ໄດ້ກຽມ
ໂຕໄປຫົດນໍ້າສົບຢູ່ອຸບໂມງ
24:23 ແລ້ວບັດເຂົາບໍ່ພໍ້ສົບຂອງເພິ່ນ ເຂົາເລີຍຫລົບມາເວົ້າໃຫ້ໝູ່ຟັງວ່າ ເຂົາໄດ້
ເຫັນເທວະທູດ ທີ່ບອກເຂົາວ່າເພິ່ນໄດ້ຄືນມາມີຊີວິດແລ້ວ
24:24 ແລ້ວພວກເຮົາລາງຄົນໄປເບິ່ງ ເຫັນແຕ່ອຸບໂມງບໍ່ໆ ບໍ່ເຫັນສົບຄືແມ່ຍິງເວົ້າ
ອີຫລີ

24:25 ແລ້ວ ພຣະເຢຊູ ເລີຍເວົ້າໃຫ້ເຂົາວ່າ “ໂອ້ ຄືປຶກຄືໜາແທ້ ຊ້າຫລາຍທີ່ຊິເຊື່ອ
ຄຳທຳນາຍຂອງຜູ້ເປັນປາກເປັນສຽງຂອງພຣະເຈົ້າ
24:26 ພຣະຄຣິດ ນັ້ນ ມັນສົມຄວນຢູ່ບໍ້ ທີ່ເພິ່ນຊິຜ່ານການທົນທຸກທໍລະມານ ຖືກດູ-
ຖູກແນວນີ້ ໂດຍບໍ່ປະໂຫຍດ ກວ່າຊິເຂົ້າສູ່ສັກສີຂອງເພິ່ນ”
24:27 ແລ້ວຕັ້ງແຕ່ໜັງສື ປະຖົມມະການ ຂອງ ໂມເຊ ໄປຈົນຮອດພວກໜັງສືຂອງ
ຜູ້ເປັນປາກເປັນສຽງນັ້ນ ພຣະເຢຊູ ໄດ້ບັນລະຍາຍໃຫ້ເຂົາຟັງໝົດຄູ່ແນວທີ່ເວົ້າ-
ເຖິງເພິ່ນ
24:28 ບັດພວກເຂົາໄປໃກ້ຊິຮອດບ້ານ ເອມາອູດ ແລ້ວ ໝ້ອງທີ່ເຂົາຊິມຸ້ງໄປຫັ້ນ
ພຣະເຢຊູ ເລີຍທຳທ່າວ່າຊິເລີຍໄປອີກ
24:29 ແຕ່ວ່າເຂົາດຶງເພິ່ນໄວ້ ຊັກຊວນເພິ່ນ ວ່າ “ໃຫ້ມາແວະຄ້າງຄືນນຳເຮົາຢູ່ນີ້ຊະ
ກ່ອນ ຍ້ອນມັນຊິຄໍ່າແລ້ວ” ແລ້ວເພິ່ນກໍເລີຍເຂົ້າໄປພັກຢູ່ນຳເຂົາ
24:30 ແລ້ວບັດນີ້ ມັນເປັນໄປທີ່ວ່າ ພໍເພິ່ນນັ່ງໂຕະນຳເຂົາ ເພິ່ນກໍເລີຍຫຍິບເຂົ້າຈີ່
ຂຶ້ນມາຂອບໃຈພຣະເຈົ້າ ແລ້ວບິຍື່ນໃຫ້ເຂົາ
24:31 ພໍດີ ຕາຂອງເຂົາຖືກເປີດອອກ ຮູ້ເມື່ອວ່າເປັນ ພຣະເຢຊູ ພໍຮູ້ເມື່ອແລ້ວເພິ່ນ
ກໍຫາຍໄປ
24:32 ເຂົາເລີຍເວົ້າກັນວ່າ “ສົມພໍແລ້ວເນາະ ໂຕເຮົາຮູ້ສຶກຮ້ອນຮົນໃຈ ຕອນທີ່ເພິ່ນ
ເປີດບັນລະຍາຍຂໍ້ ພຣະຄຳ ໃຫ້ເຮົາຟັງຢູ່ນຳທາງ”
24:33 ແລ້ວໃນຍາມນັ້ນ ເຂົາກໍພາກັນລຸກຂຶ້ນຫລົບເມືອເມືອງ ເຢຣູຊາເລັມ ໂລດ
ໄປພໍ້ກັນກັບສິບເອັດຄົນນັ້ນ ຕອນພວມຮ່ວມກັນກັບຄົນອື່ນໆ ທີ່ຢູ່ຫັ້ນນຳ
24:34 ແລ້ວພວກເຂົາເວົ້າວ່າ “ ພຣະເຢຊູ ໄດ້ຄືນມາແຕ່ຕາຍອີຫລີ ຍ້ອນວ່າເພິ່ນ
ໄດ້ປາກົດໃຫ້ ເປໂຕ ເຫັນແລ້ວ”
24:35 ແລ້ວສອງຄົນນັ້ນໄດ້ເວົ້າເລື່ອງໃຫ້ເຂົາຟັງ ແນວທີ່ເປັນໄປນຳທາງ ກັບບັດ
ເຂົາຮູ້ເມື່ອວ່າເປັນ ພຣະເຢຊູ ຕອນເພິ່ນບິເຂົ້າຈີ່
24:36 ພວມເວົ້າຢູ່ນັ້ນ ພຣະເຢຊູ ມາຢືນຢູ່ກາງພວກເຂົາ ເວົ້າວ່າ “ຂໍໃຫ້ສັນຕິພາບ
ສະຖິດຢູ່ນຳພວກເຈົ້າເດີ້”
24:37 ແຕ່ວ່າ ພວກເຂົາທັງຕົກໃຈ ທັງຢ້ານ ຄຶດວ່າເຫັນຜີ

24:38 ພຣະເຢຊູ ກໍເລີຍປອບໃຈເຂົາວ່າ "ເປັນຫຍັງຈັ່ງອຸກອັ່ງໃຈ ຄຶດສົງໄສແທ້
24:39 ນີ້ແຫລະ ມືກັບຕີນຂອງເຮົານີ້ແມ່ນເຮົາອີຫລີ ແລ້ວຈັບເບິ່ງ ຕົນໂຕຂອງເຮົານີ້
ຜີບໍ່ເຄີຍມີເນື້ອໜັງມີດູກຄືກັນກັບພວກເຈົ້າເຫັນໂຕເຮົາດອກ"
24:40 ພໍເວົ້າແລ້ວ ພຣະເຢຊູ ກໍຍື່ນມືຍື່ນຕີນໃຫ້ເຂົາເບິ່ງ
24:41 ແລ້ວຂະໜາດເຂົາທັງຍັງວ່າ ເຫລືອຊື່ ທັງດີໃຈ ທັງເປັນຕາງຶດຢູ່ຫັ້ນ ພຣະ-
ເຢຊູ ເວົ້າກັບເຂົາວ່າ "ພວກເຈົ້າມີແນວຊິກິນຢູ່ນີ້ບໍ້"
24:42 ເຂົາເລີຍເອົາປາປີ້ງຕ່ອນໜຶ່ງ ກັບຮັງເຜີ້ງມາໃຫ້ເພິ່ນ
24:43 ແລ້ວເພິ່ນກໍກິນຕໍ່ໜ້າໃຫ້ພວກເຂົາເຫັນ ໂລດ
24:44 ແລ້ວ ພຣະເຢຊູ ບອກເຂົາວ່າ "ຖ້ອຍຄຳແນວໝູ່ນີ້ ເຮົາເຄີຍບອກພວກເຈົ້າຢູ່
ແລ້ວ ວ່າ ຄູ່ແນວຕ້ອງສຳເລັດໝົດ ຕາມຂໍ້ທີ່ມີຂຽນໄວ້ໃນໜັງສືກົດບັນຍັດຂອງ
ໂມເຊ ກັບໜັງສືພວກຜູ້ເປັນປາກເປັນສຽງ ກັບໜັງສື ເພງສັນລະເສີນ ອັນທີ່ເວົ້າ-
ເຖິງໂຕເຮົາໝົດຄູ່ຂໍ້"
24:45 ເວົ້າແລ້ວ ພຣະເຢຊູ ເປີດຈິດໃຈຂອງພວກເຂົາ ໃຫ້ເຂົ້າໃຈເລິກລຶກດີໃນ
ພຣະຄຳ ຂອງພຣະເຈົ້າ
24:46 ແລ້ວເພິ່ນບອກເຂົາວ່າ "ມີການຂຽນໄວ້ວ່າຈັ່ງຊີ້ ຈຳເປັນແລ້ວ ເຮົາຜູ້ເປັນ
ພຣະຄຣິດ *(ພຣະຜູ້ໂຜດນັ້ນ)* ຕ້ອງຖືກການທໍລະມານ ແລ້ວເປັນຂຶ້ນມາຈາກ
ຕາຍໃນມື້ທີ່ສາມ
24:47 ແລ້ວວ່າ ການກັບໃຈໃໝ່ ກັບການໃຫ້ອະໄພບາບ ຕ້ອງປະກາດໃນນາມຂອງ
ເຮົາ ເລີ່ມໃນເມືອງ ເຢຣູຊາເລັມ ຈົນອອກໄປຮອດທົ່ວຄູ່ປະເທດຊາດ
24:48 ແລ້ວພວກເຈົ້ານີ້ ເປັນພະຍານຫຼັກຖານເຖິງເລື່ອງແນວໝູ່ນີ້
24:49 ນີ້ແຫລະ ເຮົາຊິສົ່ງແນວທີ່ພຣະເຈົ້າ ຜູ້ເປັນພໍ່ເຮົາ ໄດ້ສັນຍາໄວ້ນັ້ນ ລົງມາຢູ່
ນຳພວກເຈົ້າ ແຕ່ໃຫ້ຄອຍຖ້າໃນເມືອງ ເຢຣູຊາເລັມ ນີ້ກ່ອນ ຈົນກວ່າພວກເຈົ້າ
ໄດ້ຮັບພະລັງອຳນາດຈາກເບື້ອງເທິງ"
24:50 ເວົ້າແລ້ວ ພຣະເຢຊູ ໄດ້ພາພວກເຂົາອອກໄປຮອດໝູ່ບ້ານ ເບດທາເນຍ
ແລ້ວເພິ່ນຍົກມືຂຶ້ນອວຍພອນເຂົາ

24:51 ບັດນີ້ ມັນເປັນໄປທີ່ວ່າ ພໍ ພຣະເຢຊູ ພວມອວຍພອນເຂົາຢູ່ນັ້ນ ເພິ່ນໄດ້ຖືກ
ຮັບຂຶ້ນໄປເຂົ້າສູ່ສະຫວັນ
24:52 ແລ້ວພວກເຂົາໄດ້ນະມັດສະການເພິ່ນ ຈັ່ງຊິຫລົບເມືອ ເຢຣູຊາເລັມ ດ້ວຍ
ຄວາມດີອົກດີໃຈຢ່າງຫລາຍ
24:53 ແລ້ວພວກເຂົາໄດ້ເຂົ້າໄປໃນພຣະວິຫານຢູ່ຢ່າງຕໍ່ເນື່ອງ ຍົກຍ້ອງສັນລະເສີນ
ພຣະເຈົ້າຢູ່ນັ້ນ ອາເມນ

# ໂຢຮັນ

## ໂຢຮັນ ບົດທີ 1

1:1 ແຕ່ກົກແຕ່ເຄົ້າແຕ່ຕົ້ນສະບັບພູ້ນ ອົງອຳມະຕະທຳ ດຳລົງຢູ່ແລ້ວ ແລ້ວອົງອຳ-
ມະຕະທຳສະຖິດຢູ່ກັບພຣະເຈົ້າ ແລ້ວອົງອຳມະຕະທຳນັ້ນເອງເປັນພຣະເຈົ້າ
1:2 ເພິ່ນຢູ່ກັບພຣະເຈົ້າໃນຕົ້ນສະບັບພູ້ນ
1:3 ແລ້ວໝົດຄູ່ອັນຄູ່ແນວທີ່ມີຢູ່ ໄດ້ສ້າງໂດຍເພິ່ນ ແລ້ວນອກຈາກເພິ່ນ ບໍ່ມີຫຍັງ
ຈັກແນວທີ່ເປັນມາໂດຍເພິ່ນບໍ່ໄດ້ສ້າງ
1:4 ໃນເພິ່ນນີ້ເນາະ ເປັນແຫລ່ງຊີວິດ ແລ້ວຊີວິດນັ້ນເປັນແສງສະຫວ່າງໃຫ້ຜູ້ຄົນ
ທັງຫລາຍ
1:5 ແລ້ວແສງສະຫວ່າງນີ້ໄດ້ສ່ອງເຂົ້າມາໃນຄວາມມືດ ແລ້ວຄວາມມືດບໍ່ສາມາດ
ທີ່ຊິມີໄຊຕໍ່ແສງສະຫວ່າງນັ້ນໄດ້
1:6 ແລ້ວມີຜູ້ຊາຍຜູ້ໜຶ່ງທີ່ພຣະເຈົ້າໄດ້ໃຊ້ມາ ຜູ້ນັ້ນຊື່ວ່າ ໂຢຮັນ
1:7 ໂຢຮັນ ນີ້ໄດ້ຖືກໃຊ້ມາ ມີໜ້າທີ່ເປັນພະຍານອ້າງເຖິງແສງສະຫວ່າງ ເພື່ອວ່າ
ໝົດຄູ່ຄົນຊິໄດ້ຮັບເຊື່ອ *ໃນແສງສະຫວ່າງນັ້ນ* ໂດຍຄຳພະຍານຂອງ ລາວ
1:8 ຄືຜູ້ເອງບໍ່ແມ່ນແສງສະຫວ່າງນັ້ນ ແຕ່ວ່າ ລາວ ຖືກໃຊ້ມາເພື່ອເປັນພະຍານ
ເຖິງແສງສະຫວ່າງນັ້ນເອງ
1:9 ອັນນີ້ເນາະ ເປັນແສງສະຫວ່າງທີ່ແທ້ຈິງທີ່ໄດ້ສ່ອງແສງໃຫ້ຄູ່ຄົນທີ່ເກີດມາໃນ
ໂລກ
1:10 ເພິ່ນເຂົ້າມາໃນໂລກ ໂລກທີ່ຖືກສ້າງໂດຍເພິ່ນເອງ ແຕ່ວ່າໂລກບໍ່ຍອມຮັບຮູ້
ໃນເພິ່ນເລີຍ

1:11 ເພິ່ນມາຫາຊົນຊາດຂອງເພິ່ນ ແຕ່ພວກເຂົາບໍ່ຍອມຕ້ອນຮັບເພິ່ນເລີຍ
1:12 ແຕ່ສຳລັບຜູ້ທີ່ຕ້ອນຮັບເພິ່ນໆ ມອບສິດພິເສດໃຫ້ເຂົາເປັນລູກໆ ຂອງພຣະ-
ເຈົ້າ ຄືຜູ້ທີ່ເຊື່ອວາງໃຈໃນພຣະນາມຂອງເພິ່ນ
1:13 ເປັນຜູ້ທີ່ເກີດໃໝ່ ບໍ່ແມ່ນເກີດຕາມເລືອດເນື້ອໜັງເຊື້ອສາຍ ຫລືຕາມຈຸດປະ-
ສົງຂອງຄົນ ແຕ່ໄດ້ເກີດໃໝ່ຕາມຈຸດປະສົງຂອງພຣະເຈົ້າ
1:14 ສ່ວນອົງອຳມະຕະທຳນັ້ນ ໄດ້ລົງມາຮັບສະພາບເປັນໂຕຄົນ ແລ້ວໄດ້ອາໄສຢູ່
ນຳຄົນເຮົາ ແລ້ວພວກເຮົາໄດ້ເຫັນສະຫງ່າລາສີອັນຮຸ່ງເຮືອງຂອງເພິ່ນ ເປັນສະ-
ຫງ່າລາສີສົມກັບເປັນ ພຣະບຸດ ອົງດຽວຂອງພຣະເຈົ້າ ຊຶ່ງເຕັມບໍລິບູນດ້ວຍພຣະ-
ກະລຸນາທິຄຸນ ກັບຄວາມສັດຈິງ
1:15 ສ່ວນ ໂຢຮັນ ລາວ ໄດ້ເວົ້າເປັນພະຍານເຖິງເພິ່ນຜູ້ນັ້ນວ່າ “ແມ່ນຜູ້ນີ້ເນາະທີ່
ເຮົາເຄີຍເວົ້າເຖິງ ວ່າ ‘ເພິ່ນຜູ້ທີ່ເກີດນຳຫລັງເຮົາ ກໍຍິ່ງໃຫຍ່ສຳຄັນກວ່າເຮົາ ຍ້ອນ
ວ່າເພິ່ນເປັນຢູ່ກ່ອນເຮົາ’”
1:16 ແລ້ວເຮົາໝົດຄູ່ຄົນໄດ້ຮັບພຣະກະລຸນາທິຄຸນຈາກເພິ່ນ ເປັນພຣະຄຸນຊ້ອນ
ພຣະຄຸນ ຈາກຄວາມເຕັມບໍລິບູນຂອງເພິ່ນນັ້ນ
1:17 ຄືກົດບັນຍັດໄດ້ມາທາງ ໂມເຊ ແຕ່ສ່ວນພຣະກະລຸນາທິຄຸນກັບຄວາມສັດຈິງ
ນີ້ ໄດ້ມາທາງ ພຣະເຢຊູຄຣິດ
1:18 ບໍ່ມີໃຜເຄີຍເຫັນພຣະເຈົ້າຈັກເທື່ອ ມີແຕ່ ພຣະບຸດ ອົງດຽວ ຜູ້ທີ່ເຄີຍສະຖິດຢູ່-
ໃນອ້ອມກອດຂອງພຣະເຈົ້າຜູ້ເປັນພໍ່ ພຣະບຸດ ນັ້ນເອງໄດ້ປະກາດເຖິງເພິ່ນຢ່າງ
ເປີດເຜີຍ
1:19 ແລ້ວຄຳພະຍານຂອງ ໂຢຮັນ ເປັນແນວນີ້ ວ່າ ຕອນພວກຜູ້ນຳຂອງຄົນ ຢິວ
ໃນເມືອງ ເຢຣູຊາເລັມ ໄດ້ ໃຊ້ພວກປະໂລຫິດ ກັບພວກ ເລວີ ຜູ້ລາງຄົນ ໄປຖາມ
ໂຢຮັນ ວ່າ “ເຈົ້າເປັນໃຜ”
1:20 ໂຢຮັນ ກໍບໍ່ໄດ້ອຳໄວ້ແຕ່ໄດ້ຮັບປາກວ່າ “ໂຕເຮົາບໍ່ແມ່ນ ພຣະຄຣິດ ດອກ”
1:21 ແລ້ວພວກເຂົາຖາມລາວວ່າ “ຄັ່ນຈັ່ງຊັ້ນ ເຈົ້າແມ່ນ ເອລີຢາ ຊັ້ນບໍ້” ໂຢຮັນ
ຕອບວ່າ “ເຮົາບໍ່ແມ່ນ” ແລ້ວເຂົາຖາມອີກ “ເຈົ້າແມ່ນຜູ້ເປັນປາກເປັນສຽງນັ້ນທີ່
ເຮົາຄອຍຖ້າບໍ້” ໂຢຮັນ ກໍຕອບວ່າ “ບໍ່ແມ່ນ”

1:22 ແລ້ວພວກເຂົາຖາມອີກວ່າ “ເຈົ້າເປັນໃຜຊັ້ນ ຊ່ອຍຕອບມາແໜ່ ເພື່ອພວກ
ເຮົາຊິມີຄຳຕອບໃຫ້ຜູ້ທີ່ໃຊ້ເຮົາມາ ເຈົ້າໄປຈັ່ງໃດມາຈັ່ງໃດແໜ່”
1:23 ບັດນີ້ ລາວ ຕອບພວກເຂົາ ວ່າ “ເຮົາພຽງແຕ່ເປັນສຽງຮ້ອງຂອງຄົນໜຶ່ງໃນ
ຖິ່ນແຫ້ງແລ້ງ ວ່າ ‘ໃຫ້ກຽມທາງຂອງພຣະຜູ້ເປັນເຈົ້າໃຫ້ມັນຊື່ກົງເດີ້’ ຕາມຄຳທຳ-
ນາຍຂອງ ເອລີຢາ ນັ້ນເອງ ຜູ້ເປັນປາກເປັນສຽງຂອງພຣະເຈົ້າ”
1:24 ບັດນີ້ ຜູ້ລາງຄົນທີ່ຖືກໃຊ້ມາຫາ ໂຢຮັນ ນັ້ນ ໄດ້ມາຈາກພວກຄະນະ ຟາຣີ-
ຊາຍ
1:25 ບັດນີ້ ພວກເຂົາຈັ່ງຊັກຖາມ ໂຢຮັນ ວ່າ ຄັ່ນວ່າເຈົ້າບໍ່ແມ່ນ ພຣະຄຣິດ ນັ້ນ ກັບ
ວ່າບໍ່ແມ່ນ ເອລີຢາ ກັບບໍ່ແມ່ນຜູ້ເປັນປາກເປັນສຽງທີ່ພວກເຮົາຄອຍຖ້າຢູ່ນັ້ນ
ແລ້ວເປັນຫຍັງເຈົ້າຈັ່ງໃຫ້ຄົນມາຮັບການຈຸ່ມນໍ້າຊັ້ນ
1:26 ແລ້ວ ໂຢຮັນ ຕອບພວກເຂົາວ່າ “ເຮົາໄດ້ໃຫ້ຄົນມາຮັບການຈຸ່ມນໍ້າກໍແມ່ນ
ແຕ່ວ່າໄດ້ມີຜູ້ໜຶ່ງຢູ່ນຳພວກເຮົາທີ່ພວກເຈົ້າຍັງບໍ່ຮູ້ຈັກ
1:27 ‘ແມ່ນເພິ່ນຜູ້ນັ້ນເນາະ ຜູ້ທີ່ມາຕາມຫລັງເຮົາ ເປັນຜູ້ຍິ່ງໃຫຍ່ສຳຄັນກວ່າເຮົາ
ຊຶ່ງໂຕເຮົາເອງຍັງບໍ່ດີພໍທີ່ຊິແກ້ສາຍເກີບໃຫ້ເພິ່ນເລີຍ’
1:28 ເຫດການນີ້ ໄດ້ເກີດໃນໝູ່ບ້ານ ເບດທາເນຍ ຢູ່ຟາກຝັ່ງຕະເວັນອອກຂອງ
ແມ່ນໍ້າ ຢໍດາເນ ຕອນ ໂຢຮັນ ພວມໃຫ້ຄົນຮັບການຈຸ່ມນໍ້ານັ້ນ
1:29 ມື້ຕໍ່ມາ ໂຢຮັນ ເຫັນ ພຣະເຢຊູ ພວມຍ່າງເຂົ້າມາຫາ ລາວ ເລີຍເວົ້າຂຶ້ນວ່າ
‘ນີ້ແຫລະ ແກະນ້ອຍຂອງພຣະເຈົ້າ ຜູ້ນຳເອົາບາບຂອງຊາວໂລກທັງຫລາຍອອກ
ໄປ
1:30 ແມ່ນຜູ້ນີ້ເນາະທີ່ເຮົາໄດ້ເວົ້າເຖິງແລ້ວວ່າ “ຜູ້ທີ່ມາຊິຕາມຫລັງເຮົາເປັນຜູ້ຍິ່ງ-
ໃຫຍ່ສຳຄັນກວ່າເຮົາ ຍ້ອນວ່າເພິ່ນຢູ່ກ່ອນເຮົາ”
1:31 ສ່ວນເຮົານີ້ບໍ່ຮູ້ຈັກກັບເພິ່ນດອກ ມີແຕ່ຮູ້ວ່າເພິ່ນຊິຕ້ອງຮັບການເປີດເຜີຍໃຫ້
ຊາວ ອິສະຣາເອນ ໄດ້ຮູ້ໄດ້ເຫັນໂຕຈິງ ຈັ່ງເປັນເຫດທີ່ເຮົາມາປະກາດໃຫ້ຄົນຮັບ
ການຈຸ່ມນໍ້າ ກັບໃຈໃໝ່ໄວ້ກ່ອນ’
1:32 ແລ້ວ ໂຢຮັນ ໄດ້ເປັນພະຍານຢືນຢັນວ່າ ເຮົາເຫັນ ພຣະວິນຍານ ສະເດັດລົງ-
ມາ ມີລັກສະນະເປັນຄືກັນກັບຮູບຮ່າງນົກເຂົາ ລົງມາສະຖິດຢູ່ນຳເພິ່ນ

1:33 ສ່ວນເຮົາບໍ່ຮູ້ຈັກກັບເພິ່ນດອກ ແຕ່ວ່າຜູ້ເພິ່ນທີ່ໃຊ້ເຮົາມາປະກາດໃຫ້ຄົນຮັບ
ການຈຸ່ມນໍ້ານີ້ ເພິ່ນບອກເຮົາວ່າ 'ຜູ້ທີ່ເຈົ້າຊິເຫັນ ພຣະວິນຍານ ລົງມາສະຖິດຢູ່ນໍາ
ນັ້ນ ແມ່ນຜູ້ນັ້ນເນາະ ເປັນຜູ້ທີ່ຊິຈຸ່ມຄົນດ້ວຍ ພຣະວິນຍານ ' *(ໃຫ້ເບິ່ງ 1 ໂກຣິນ-
ໂທ 12:13)*
1:34 ແລ້ວເຮົານີ້ໄດ້ເຫັນຜູ້ນັ້ນແລ້ວ ຈັ່ງຢືນຢັນວ່າ ຜູ້ນີ້ເນາະ ແມ່ນ ພຣະບຸດ ຂອງ
ພຣະເຈົ້າອີຫລີ"
1:35 ແລ້ວມື້ຕໍ່ມາ ໂຢຮັນ ກໍຢືນຢູ່ກັບລູກສິດຂອງ ລາວ ສອງຄົນ
1:36 ແລ້ວພໍ ລາວ ເຫັນ ພຣະເຢຊູ ຍ່າງມາ ໂຢຮັນ ເລີຍເວົ້າວ່າ ເບິ່ງເດີ້ ນີ້ແຫລະ
ແມ່ນແກະນ້ອຍຂອງພຣະເຈົ້າໃຊ້ມາ
1:37 ພໍລູກສິດສອງຄົນນັ້ນໄດ້ຍິນ ໂຢຮັນ ເວົ້າຈັ່ງຊັ້ນ ເຂົາເລີຍພາກັນຕິດຕາມ
ພຣະເຢຊູ ໄປ
1:38 ບັດນີ້ ພຣະເຢຊູ ຫລຽວມາເຫັນພວກເຂົາຕິດຕາມເລີຍຖາມວ່າ "ພວກເຈົ້າມາ
ຊອກຫາຫຍັງ" ເຂົາຕອບເພິ່ນວ່າ "ຣັບບີເອີຍ" (ແປວ່າອາຈານ) "ທ່ານພັກຢູ່ໃສ"
1:39 ພຣະເຢຊູ ຕອບເຂົາວ່າ "ມາເບິ່ງເອົາເອງ ໂລດ " ເຂົາກໍເລີຍພາກັນໄປເບິ່ງ
ໜ້ອງ ພຣະເຢຊູ ພັກ ແລ້ວກໍໄດ້ຢູ່ນໍາ ພຣະເຢຊູ ມື້ນັ້ນ (ຕອນນັ້ນປະມານສີ່ໂມງ
ແລງແລ້ວ)
1:40 ຜູ້ໜຶ່ງໃນສອງຄົນນັ້ນທີ່ໄດ້ຍິນ ໂຢຮັນ ເວົ້າແລ້ວໄດ້ຕິດຕາມ ພຣະເຢຊູ ຄື ອັນ-
ເດອາ ນ້ອງຊາຍຂອງ ຊີໂມນເປໂຕ
1:41 ແຕ່ກ່ອນທີ່ຕິດຕາມເພິ່ນ ອັນເດອາ ກໍໄດ້ໄປຫາ ຊີໂມນ ຜູ້ເປັນອ້າຍ ບອກ
ອ້າຍວ່າ "ເຮົາໄດ້ຮັບ ພຣະເມຊີອາ ແລ້ວ" (ຊຶ່ງແປວ່າ ພຣະຄຣິດ )
1:42 ແລ້ວ ອັນເດອາ ກໍເລີຍພາອ້າຍໄປຫາ ພຣະເຢຊູ ພໍ ພຣະເຢຊູ ຫລຽວເບິ່ງ ຊີ-
ໂມນ ແລ້ວກໍເວົ້າວ່າ " ຊີໂມນ ລູກຂອງ ໂຢນາ ເອີຍ ແຕ່ນີ້ໄປຊິເອີ້ນກັນວ່າ ເກ-
ຟາ " (ຊຶ່ງແປວ່າ " ເປໂຕ " ຫລື "ກ້ອນຫີນ")
1:43 ມື້ຕໍ່ມາ ພຣະເຢຊູ ມຸ້ງໄປແຄວ້ນ ກາລີເລ ແລ້ວເພິ່ນໄດ້ຮັບ ຟີລິບ ຈັ່ງບອກ
ເຂົາວ່າ "ໃຫ້ຕາມເຮົາມາເຖີ"

1:44 ຟີລິບ ນີ້ ເປັນໄທເມືອງ ເບດໄຊດາ ຢູ່ເມືອງດຽວກັນກັບ ອັນເດອາ ກັບ ເປ-
ໂຕ
1:45 ຟີລິບ ໄດ້ໄປຫາຄົນທີ່ຊື່ວ່າ ນະທານາເອັນ ແລ້ວບອກເຂົາວ່າ “ພວກເຮົາໄດ້-
ຮັບຜູ້ນັ້ນແລ້ວ ທີ່ ໂມເຊ ໄດ້ຂຽນເຖິງໃນໜັງສືກົດບັນຍັດ ກັບພວກຜູ້ເປັນປາກ-
ເປັນສຽງໄດ້ຂຽນເຖິງນຳ ຄື ເຢຊູ ໄທເມືອງ ນາຊາເຣັດ ລູກຊາຍຂອງ ໂຢເຊບ ”
1:46 ແລ້ວ ນະທານາເອັນ ຖາມ ຟີລິບ ວ່າ “ເປັນໄປໄດ້ບໍ້ ທີ່ຊິມີແນວດີອອກມາຈາກ
ເມືອງ ນາຊາເຣັດ ນັ້ນ” ຟີລິບ ຕອບວ່າ “ໃຫ້ມາເບິ່ງເອົາເອງ ໂລດ ”
1:47 ພຣະເຢຊູ ພໍເຫັນ ນະທານາເອັນ ເຂົ້າມາຫາ ເລີຍເວົ້າຂຶ້ນວ່າ ນີ້ແຫລະ ຄື
ຊາວ ອິສະຣາເອນ ຜູ້ທ່ຽງທຳອີຫລີ ທີ່ບໍ່ມີເລ້ຫລ່ຽມເລີຍ
1:48 ບັດນີ້ ນະທານາເອັນ ຖາມເພິ່ນວ່າ ທ່ານຮູ້ຈັກຂ້ອຍໄດ້ແນວໃດ ພຣະເຢຊູ
ຕອບວ່າ “ກ່ອນທີ່ ຟີລິບ ໄປເອີ້ນເຈົ້ານັ້ນ ເຮົາໄດ້ເຫັນເຈົ້າແລ້ວ ຕອນເຈົ້າຢູ່ໃຕ້ຕົ້ນ
ໝາກເດື່ອພູ້ນ”
1:49 ນະທານາເອັນ ຕອບວ່າ “ອາຈານເອີຍ ທ່ານຕ້ອງເປັນ ພຣະບຸດ ຂອງພຣະ-
ເຈົ້ານັ້ນອີຫລີ ແລ້ວກໍເປັນປະລະບຽງເປັນກະສັດຂອງຊາວ ອິສະຣາເອນ ໂດຍ
ແທ້”
1:50 ພຣະເຢຊູ ຕອບວ່າ “ເຈົ້າໄດ້ເຊື່ອຍ້ອນເຮົາບອກເຈົ້າວ່າ ‘ເຮົາເຫັນເຈົ້າຢູ່ໃຕ້
ຕົ້ນໝາກເດື່ອ’ ນັ້ນບໍ້ ຕໍ່ໄປນີ້ເຈົ້າຊິໄດ້ເຫັນຫລາຍອັນຫລາຍແນວທີ່ຍິ່ງໃຫຍ່ກວ່າ
ນີ້ອີກ”
1:51 ແລ້ວ ພຣະເຢຊູ ບອກເຂົາອີກວ່າ ເຮົາຊິບອກເຈົ້າຕາມຊື່ນີ້ເນາະ ວ່າຕໍ່ໄປນີ້
ເຈົ້າຊິໄດ້ເຫັນຟ້າສະຫວັນເປີດອອກ ມີເທວະທູດຂອງພຣະເຈົ້າຂຶ້ນໆ ລົງໆ ຢູ່ຫັ້ນ
ລົງມານຳບຸດມະນຸດເຮົານີ້

## ໂຢຮັນ ບົດທີ 2

2:1 ຕໍ່ມານັບເປັນມື້ທີ່ສາມ ມີງານກິນດອງໃນໝູ່ບ້ານ ການາ ຢູ່ແຄວັນ ກາລີເລ
ແລ້ວແມ່ຂອງ ພຣະເຢຊູ ກໍຢູ່ນັ້ນນຳ
2:2 ບັດນີ້ ພຣະເຢຊູ ພ້ອມທັງລູກສິດກໍໄດ້ຮັບເຊີນໄປກິນດອງນຳ

2:3 ແລ້ວ ບັດພໍເຫລົ້າອະງຸ່ນດອງຂອງເຈົ້າພາບງານໝົດໄປ ແມ່ຂອງ ພຣະເຢຊູ
ມາບອກເພິ່ນວ່າ “ແຂກໝົດເຫລົ້າອະງຸ່ນດອງກິນແລ້ວ”
2:4 ພຣະເຢຊູ ບອກແມ່ວ່າ “ຍິງເອີຍ ເລື່ອງກັງວົນຂອງແມ່ ມັນກ່ຽວຂ້ອງອີຫຍັງນຳ
ຂ້ອຍນີ້ ຍາມເວລາຂອງຂ້ອຍຍັງມາບໍ່ທັນຮອດ”
2:5 ແມ່ຂອງ ພຣະເຢຊູ ເລີຍບອກພວກຄົນໃຊ້ຢູ່ເຮືອນນັ້ນວ່າ “ແນວໃດທີ່ເພິ່ນ
ບອກກໍໃຫ້ເຮັດຕາມເດີ້”
2:6 ບັດນີ້ ຕາມທຳນຽມຂອງພວກຢິວໃນການຊຳລະລາງມົນທິນ ມີໂອ່ງນໍ້າຫີນຫົກ
ໜ່ວຍຕັ້ງໄວ້ຢູ່ຫັ້ນ ແຕ່ລະໜ່ວຍກໍຈຸນໍ້າໄດ້ເກືອບ ແປດສິບ ເຖິງ ຮ້ອຍຊາວລິດ
2:7 ພຣະເຢຊູ ກໍເລີຍສັ່ງພວກຄົນໃຊ້ນັ້ນວ່າ ໃຫ້ໄປຕັກນໍ້າໃສ່ໂອ່ງນໍ້າໃຫ້ເຕັມໝົດ-
ຄູ່ໜ່ວຍເດີ້ ແລ້ວເຂົາກໍເລີຍພາກັນຕັກເອົານໍ້າມາໃສ່ໂອ່ງນໍ້າໃຫ້ເຕັມປ່ຽມເດີ້
2:8 ເຮັດແລ້ວ ເພິ່ນກໍບອກພວກເຂົາວ່າ “ບັດນີ້ໃຫ້ຕັກເອົາໄປໃຫ້ເຈົ້າພາບງານໄດ້
ເລີຍເດີ້” ພວກເຂົາກໍເລີຍເອົາໄປໃຫ້
2:9 ພໍເຈົ້າຂອງງານຊີມເບິ່ງນໍ້າທີ່ ພຣະເຢຊູ ໄດ້ປ່ຽນໃຫ້ເປັນເຫລົ້າອະງຸ່ນດອງນັ້ນ
ແລ້ວກໍບໍ່ຮູ້ຈັກວ່າມາແຕ່ໃສ (ແຕ່ສ່ວນພວກຄົນໃຊ້ທີ່ຕັກນໍ້າມາກໍຮູ້ຢູ່) ເຈົ້າຂອງ
ງານກໍເລີຍເອີ້ນເຈົ້າບ່າວມາ
2:10 ແລ້ວເຈົ້າພາບງານຈັ່ງເວົ້ານຳເຈົ້າບ່າວວ່າ ຕາມທຳມະດາໃຜໆ ກໍເອົາເຫລົ້າ-
ອະງຸ່ນດອງຢ່າງດີອອກມາໃຫ້ກິນກ່ອນ ບັດແຂກກິນອີ່ມພໍສົມຄວນແລ້ວ ຈັ່ງເອົາ
ແນວບໍ່ຄ່ອຍດີມາໃຫ້ຕາມຫລັງ ແຕ່ວ່າບັດນີ້ ເຈົ້າໄດ້ເກັບເຫລົ້າອະງຸ່ນດອງຢ່າງດີ
ໄວ້ຈົນຮອດຄືນີ້ເນາະ
2:11 ເຫດການອັດສະຈັນນີ້ ແນວທີ່ ພຣະເຢຊູ ໄດ້ເຮັດໃນໝູ່ບ້ານ ການາ ແຄວ້ນ
ກາລີເລ ກໍເປັນເຄື່ອງໝາຍສຳຄັນເທື່ອແຣກທີ່ເພິ່ນໄດ້ເລີ່ມສະແດງສະຫງ່າລາສີ
ອັນຮຸ່ງເຮືອງຂອງເພິ່ນ ພວກລູກສິດຂອງເພິ່ນຈັ່ງໄດ້ເລີ່ມມີຄວາມເຊື່ອວາງໃຈໃນ
ເພິ່ນ
2:12 ຫລັງຈາກນີ້ ພຣະເຢຊູ ໄດ້ເດີນທາງລົງໄປເມືອງ ກາເປນາອູມ ເພິ່ນ ກັບແມ່
ກັບພວກນ້ອງຊາຍ ພ້ອມທັງລູກສິດຂອງເພິ່ນ ແລ້ວເຂົາບໍ່ໄດ້ພັກຢູ່ນັ້ນຫລາຍມື້

2:13 ບັດນີ້ມັນໃກ້ຊິຮອດເທດສະການສະຫລອງຄົບອ້ອມມື້ພຣະເຈົ້າກູ້ຊາດຂອງ
ຄົນ ຢິວ ນັ້ນແລ້ວ ພຣະເຢຊູ ກໍເລີຍຂຶ້ນໄປເມືອງ ເຢຣູຊາເລັມ
2:14 ແລ້ວຢູ່ໃນບໍລິເວນວິຫານນັ້ນ ເພິ່ນໄດ້ຮັບພວກຄົນຄ້າຂາຍງົວ ທັງແກະ ກັບ
ນົກເຂົາ ແລ້ວມີຄົນຮັບແລກປ່ຽນເງິນນໍາ ພາກັນເຮັດທຸລະກິດຢູ່ນັ້ນ
2:15 ແລ້ວ ພຣະເຢຊູ ພໍເອົາເຊືອກມາເຮັດເປັນແສ້ ໄລ່ພວກເຂົາອອກຈາກວິຫານ
ໝົດຄູ່ຄົນ ພ້ອມທັງຝູງແກະກັບງົວຂອງເຂົາ ຝ່າຍພວກຮັບແລກປ່ຽນເງິນນັ້ນ ເພິ່ນ
ໄດ້ເທເງິນຂອງເຂົາອອກ ກັບຄວ່ຳໂຕະນໍາ
2:16 ແລ້ວເພິ່ນບອກພວກຄົນທີ່ຂາຍນົກເຂົາວ່າ “ໃຫ້ຟ້າວເກັບເອົາຂອງອອກໄປ
ໃຫ້ໝົດເດີ້ ຢ່າສູ່ເອົາເຮືອນຂອງພຣະເຈົ້າຜູ້ເປັນພໍ່ຂອງເຮົາ ເຮັດໃຫ້ເປັນຕະ-
ຫລາດຄ້າຂາຍເດີ້”
2:17 ແລ້ວບັດນີ້ພວກລູກສິດຂອງເພິ່ນກໍໄດ້ຈື່ຂໍ້ ພຣະຄໍາ ທີ່ກ່າວໄວ້ວ່າ “ຄວາມກະ-
ຕືລືລົ້ນເພື່ອວິຫານຂອງທ່ານໄດ້ກິນໃຈຜູ້ຂ້າ” *(ໃຫ້ເບິ່ງ ເພງສັນລະເສີນ 69:9)*
2:18 ບັດນີ້ ພວກຜູ້ນໍາຂອງຄົນ ຢິວ ເລີຍໂຕ້ຕອບ ພຣະເຢຊູ ວ່າ ເຈົ້າຊິສະແດງ
ເຫດການສໍາຄັນອີຫຍັງທີ່ບົ່ງບອກພວກເຮົາໄດ້ວ່າ ເຈົ້າມີສິດມາເຮັດຈັ່ງຊີ້ໄດ້
2:19 ພຣະເຢຊູ ເລີຍຕອບເຂົາວ່າ “ໃຫ້ທໍາລາຍວິຫານນີ້ເດີ້ ແລ້ວພາຍໃນສາມມື້
ເຮົາຊິເອົາຂຶ້ນມາໃໝ່”
2:20 ບັດນີ້ ພວກຜູ້ນໍາຂອງຄົນ ຢິວ ກໍຖາມເພິ່ນວ່າ “ພຣະວິຫານນີ້ເຂົາໃຊ້ເວລາ
ສ້າງຕັ້ງສີ່ສິບຫົກປີ ແລ້ວເຈົ້າຊິເອົາຂຶ້ນມາໃໝ່ໄດ້ພາຍໃນສາມມື້ຕີ້”
2:21 ແຕ່ວ່າວິຫານທີ່ ພຣະເຢຊູ ເວົ້ານີ້ ເພິ່ນໝາຍເຖິງຕົນໂຕຂອງເພິ່ນເອງ
2:22 ຈັ່ງຊັ້ນ ຢູ່ມາ ຫລັງຈາກ ພຣະເຢຊູ ໄດ້ເປັນຂຶ້ນມາຈາກຕາຍແລ້ວ ພວກລູກ-
ສິດຂອງເພິ່ນຈັ່ງຄ່ອຍຈື່ ຄວາມເວົ້າທີ່ ພຣະເຢຊູ ໄດ້ບອກເຂົາໃນເລື່ອງນີ້ ເຂົາກໍ
ເລີຍເກີດຄວາມເຊື່ອຖືໃນ ພຣະຄໍາ ກັບໃນຖ້ອຍຄໍາທີ່ ພຣະເຢຊູ ໄດ້ເວົ້າ
2:23 ບັດນີ້ ຕອນທີ່ ພຣະເຢຊູ ໄປຮ່ວມເທດສະການງານສະຫລອງມື້ກູ້ຊາດຢູ່ໃນ
ເມືອງ ເຢຣູຊາເລັມ ນັ້ນ ໃນຍາມການລ້ຽງສະຫລອງກໍມີຫລາຍຄົນໄດ້ມາເຊື່ອຫາ-
ກໍ່ໃນພຣະນາມຂອງເພິ່ນ ຕອນທີ່ເຂົາເຫັນເຫດການອັດສະຈັນຕ່າງໆ ທີ່ເພິ່ນໄດ້
ເຮັດ

2:24 ແຕ່ສ່ວນ ພຣະເຢຊູ ເພິ່ນບໍ່ໄດ້ຫລົງຜູກມັດໄວ້ໃນພວກເຂົາ ຍ້ອນວ່າເພິ່ນຮູ້ຈັກ
ນິໄສໃຈຄໍຂອງຜູ້ຄົນ
2:25 ກັບເພິ່ນບໍ່ມີຄວາມຈຳເປັນທີ່ຊິໃຫ້ຜູ້ໃດຊ່ອຍເປັນພະຍານອ້າງເພື່ອກັນແລະ
ກັນ ຍ້ອນເພິ່ນຮູ້ຈັກເຖິງສ່ວນພາຍໃນຂອງຄົນ

## ໂຢຮັນ ບົດທີ 3

3:1 ບັດນີ້ ມີຜູ້ຊາຍຜູ້ໜຶ່ງໃນພວກຄະນະ ຟາຣີຊາຍ ຊື່ວ່າ ນີໂກເດມ ມີຕຳແໜ່ງ
ເປັນຜູ້ນຳຂອງຄົນ ຢິວ
3:2 ຜູ້ຊາຍຜູ້ນີ້ໄດ້ມາຫາ ພຣະເຢຊູ ເປັນຍາມກາງຄືນ ແລ້ວເວົ້າກັບເພິ່ນວ່າ ອາ-
ຈານ ພວກຜູ້ຂ້າຮູ້ຈັກດີວ່າອາຈານຕ້ອງເປັນຜູ້ສອນມາຈາກພຣະເຈົ້າ ຍ້ອນວ່າບໍ່ມີ
ໃຜສາມາດເຮັດເຄື່ອງໝາຍອັນສຳຄັນແນວນີ້ໄດ້ ນອກຈາກພຣະເຈົ້າສະຖິດຢູ່ນຳ
ເຂົາ
3:3 ພຣະເຢຊູ ຕອບເຂົາວ່າ ເຮົາຊິບອກເຈົ້າຕາມຊື່ນີ້ເນາະ ນອກຈາກຄົນໃດຄົນ
ໜຶ່ງເກີດໃໝ່ຈາກເບື້ອງເທິງ ເຂົາບໍ່ມີສິດເຫັນລາຊະອານາຈັກຂອງພຣະເຈົ້າເລີຍ
3:4 ນີໂກເດມ ເວົ້າວ່າ "ໂອ໋ ຄົນຊິເກີດໃໝ່ໄດ້ແນວໃດບັດເຖົ້າແລ້ວ ເຂົາຊິເຂົ້າໄປ
ໃນທ້ອງແມ່ອີກເທື່ອທີ່ສອງ ແລ້ວເກີດອີກໄດ້ບໍ້"
3:5 ພຣະເຢຊູ ຕອບວ່າ "ເຮົາຊິບອກເຈົ້າອີກຕາມຊື່ນີ້ເນາະ ວ່າ ນອກຈາກຄົນໃດ
ຄົນໜຶ່ງຊິເກີດໃໝ່ໂດຍນ້ຳ ກັບໂດຍ ພຣະວິນຍານ ເຂົາຊິບໍ່ມີສິດເຂົ້າໃນລາຊະ-
ອານາຈັກຂອງພຣະເຈົ້າເລີຍ
3:6 ຄືການເກີດມາຈາກເລືອດຊີ້ນເຊື້ອໄຂ ກໍເປັນແຕ່ເລືອດຊີ້ນເຊື້ອໄຂ ແຕ່ວ່າການ
ເກີດໃໝ່ຈາກ ພຣະວິນຍານ ກໍເປັນຈິດວິນຍານ
3:7 ບໍ່ຕ້ອງແປກໃຈ ທີ່ເຮົາໄດ້ບອກເຈົ້າມາແລ້ວວ່າ 'ເຈົ້າຕ້ອງເກີດໃໝ່'
3:8 ຄືສ່ວນລົມນີ້ ມັນກໍພັດໄປມາຕາມກະແສຂອງມັນ ແລ້ວເຈົ້າກໍໄດ້ຍິນສຽງມັນຢູ່
ແຕ່ບໍ່ສາມາດບອກໄດ້ວ່າມັນພັດມາຈາກໃສແລ້ວໄປໃສ ສ່ວນຜູ້ທີ່ເກີດໃໝ່ຝ່າຍ
ວິນຍານກໍຄືກັນນັ້ນເນາະ"
3:9 ນີໂກເດມ ກໍເລີຍຖາມອີກວ່າ "ແນວໝູ່ນີ້ຊິເປັນໄປໄດ້ຈັ່ງໃດ"

3:10 ພຣະເຢຊູ ຕອບ ລາວ ວ່າ “ຂະໜາດເຈົ້າຜູ້ເປັນອາຈານສອນພວກອິດສະຣາ-
ເອັນແລ້ວ ເຈົ້າກໍຍັງບໍ່ເຂົ້າໃຈໃນເລື່ອງນີ້ຢູ່ບໍ້
3:11 ເຮົາຊິບອກເຈົ້າຕາມຊື່ນີ້ເນາະ ຄືເຮົາໄດ້ເວົ້າເປັນພະຍານເຖິງແນວທີ່ເຮົາໄດ້ຮູ້
ໄດ້ເຫັນມາແລ້ວ ແຕ່ວ່າພວກເຈົ້າກໍຍັງບໍ່ຍອມຮັບໃນຄຳພະຍານຂອງເຮົາເລີຍ
3:12 ຄັ່ນເຮົາບອກເຈົ້າໃນເລື່ອງທາງທຳມະດາຂອງໂລກນີ້ ແລ້ວເຈົ້າຍັງບໍ່ເຊື່ອ ບັດ
ເຮົາຊິນຳເອົາເລື່ອງທາງສະຫວັນມາເວົ້າ ເຈົ້າຊິເຊື່ອໄດ້ຈັ່ງໃດ
3:13 ຄືບໍ່ເຄີຍມີໃຜຂຶ້ນໄປສະຫວັນເລີຍ ມີແຕ່ເຮົາຜູ້ເປັນບຸດມະນຸດຊຶ່ງສະຖິດຢູ່ເທິງ
ສະຫວັນ ທີ່ໄດ້ສະເດັດລົງມາ
3:14 ແລ້ວການທີ່ ໂມເຊ ໄດ້ຍົກງູທອງແດງຂຶ້ນໃນຖິ່ນແຫ້ງແລ້ງນັ້ນ ບຸດມະນຸດເຮົາ
ນີ້ ຊິຕ້ອງຖືກຍົກຂຶ້ນຄືກັນ *(ໃຫ້ເບິ່ງ ຈົດເຊັ່ນບັນຊີ 21:4-9)*
3:15 ເພື່ອວ່າຜູ້ໃດທີ່ເຊື່ອວາງໃຈໃນເຮົາ ຜູ້ນັ້ນຊິບໍ່ໄດ້ພິນາດ ແຕ່ມີຊີວິດອັນຕະ-
ຫລອດໄປເປັນນິດ
3:16 ໂດຍວ່າ ພຣະເຈົ້າໄດ້ເມດຕາຮັກຊາວໂລກຫລາຍສ່ຳໃດ ຈັ່ງໄດ້ອຸທິດ ພຣະ-
ບຸດ ລູກໂທນຂອງເພິ່ນ ເພື່ອຜູ້ທີ່ເຊື່ອວາງໃຈໃນເພິ່ນຜູ້ນັ້ນ ຊິບໍ່ໄດ້ພິນາດ ແຕ່ມີ
ຊີວິດຕະຫລອດການເປັນນິດ
3:17 ຍ້ອນວ່າພຣະເຈົ້າບໍ່ໄດ້ໃຊ້ ພຣະບຸດ ຂອງເພິ່ນເຂົ້າມາໃນໂລກເພື່ອຊິຕັດສິນ
ລົງໂທດໂລກ ແຕ່ມາເພື່ອໂລກຊິລອດພົ້ນໂດຍທາງ ພຣະບຸດ ນັ້ນ
3:18 ຈັ່ງຊັ້ນ ສ່ວນຜູ້ທີ່ເຊື່ອວາງໃຈໃນ ພຣະບຸດ ນັ້ນ ຊິບໍ່ໄດ້ຢູ່ໃຕ້ການຕັດສິນລົງ-
ໂທດ ແຕ່ສ່ວນຜູ້ໃດທີ່ບໍ່ເຊື່ອວາງໃຈໃນ ພຣະບຸດ ຜູ້ນັ້ນຊິຕ້ອງຖືກການຕັດສິນ
ລົງໂທດຢູ່ແລ້ວ ຍ້ອນວ່າເຂົາບໍ່ໄດ້ວາງໃຈໃນ ພຣະບຸດ ຜູ້ເປັນລູກໂທນຂອງ
ພຣະເຈົ້າ
3:19 ແລ້ວຫລັກຂອງການຕັດສິນລົງໂທດເປັນແນວນີ້ ຄື ແສງສະຫວ່າງໄດ້ເຂົ້າມາ
ໃນໂລກແລ້ວ ແຕ່ໂລກຮັກຄວາມມືດຫລາຍກວ່າຮັກຄວາມສະຫວ່າງ ຍ້ອນວ່າພຶ-
ຕິການຂອງເຂົາຊົ່ວ
3:20 ຄືຕູ່ຄົນທີ່ເຮັດຊົ່ວມັກຊິກຽດຊັງຊັງຄວາມສະຫວ່າງ ແລ້ວເຂົາຫລີກຈາກຄວາມ
ສະຫວ່າງນັ້ນ ຢ້ານວ່າຄວາມຊົ່ວຂອງເຂົານັ້ນຊິຖືກເປີດເຜີຍອອກ

3:21 ແຕ່ວ່າຜູ້ທີ່ມັກເຮັດຕາມຄວາມຈິງກໍຊິມາຫາຄວາມສະຫວ່າງນັ້ນ ໂລດ ເພື່ອ
ການດີຂອງເຂົາຊິປາກົດອອກຢ່າງຊັດແຈ້ງ ຍ້ອນວ່າເຂົາໄດ້ເຮັດໂດຍຄວນອາໄສ
ໃນພຣະເຈົ້າ"
3:22 ຕໍ່ຈາກນັ້ນມາ ພຣະເຢຊູ ກັບລູກສິດຂອງເພິ່ນໄດ້ເດີນທາງໄປແຄວ້ນ ຢູດາຍ
ແລ້ວເພິ່ນໄດ້ຢູ່ກັບພວກປະຊາຊົນ ກັບໄດ້ເຮັດການຮັບຈຸ່ມນໍ້າໃຫ້ເຂົາ
3:23 ໃນຍາມດຽວກັນນັ້ນ ໂຢຮັນ ພວມເຮັດການຮັບຈຸ່ມນໍ້າໃຫ້ປະຊາຊົນ ຢູ່ເມືອງ
ໄອໂນນ ໃກ້ເມືອງ ຊາລິມ ຍ້ອນວ່າມີນໍ້າຫລາຍຢູ່ໜອງນັ້ນ ແລ້ວພວກປະຊາຊົນກໍ
ເລີຍພາກັນມາຫາ ລາວ ເພື່ອຮັບການຈຸ່ມນໍ້າ
3:24 ຕອນນັ້ນ ໂຢຮັນ ຍັງບໍ່ທັນຖືກເຈົ້າເມືອງ ເຮໂຣດ ສັ່ງຈັບໄປຂັງຄຸກ *(ໃຫ້ເບິ່ງ
ລູກາ 3:18-20)*
3:25 ບັດນີ້ ເລີ່ມເກີດມີການໂຕ້ຖຽງກັນລະຫວ່າງລູກສິດຂອງ ໂຢຮັນ ຜູ້ລາງຄົນ ກັບ
ພວກຄົນ ຢິວ ເຖິງເລື່ອງການຊຳລະລາງມົນທິນຂອງເຂົາ
3:26 ແລ້ວພວກລູກສິດຂອງ ໂຢຮັນ ເລີຍພາກັນໄປຫາ ລາວ ບອກວ່າ ອາຈານ
ເອີຍ ຄົນຜູ້ນັ້ນທີ່ເຄີຍຢູ່ກັບອາຈານຢູ່ຟາກແມ່ນໍ້າ ຢໍດາເນ ພູ້ນ ຄືຜູ້ທີ່ອາຈານເຄີຍ
ເວົ້າເຖິງຢູ່ ນີ້ແຫລະ ເຂົາພວມໃຫ້ການຈຸ່ມນໍ້າຢູ່ດຽວນີ້ ແລ້ວຄູ່ຄົນພວມຫລັ່ງໄຫລ
ໄປຫາເຂົາຢູ່
3:27 ໂຢຮັນ ຕອບພວກເຂົາວ່າ ຄົນໃດຄົນໜຶ່ງຊິບໍ່ໄດ້ຮັບອີຫຍັງເລີຍ ຄັນເພິ່ນຜູ້ຢູ່
ເທິງສະຫວັນນັ້ນ ຊິບໍ່ໄດ້ໃຫ້ເຂົາກ່ອນ
3:28 ແລ້ວພວກເຈົ້າເອງ ເປັນພະຍານທີ່ໄດ້ຍິນເຮົາເຄີຍເວົ້າວ່າ "ໂຕເຮົາເອງບໍ່
ແມ່ນ ພຣະຄຣິດ ພຣະຜູ້ໂຜດນັ້ນ" ແຕ່ເຮົາໄດ້ບອກວ່າ "ເຮົາຖືກໃຊ້ມາກ່ອນເພິ່ນ"
3:29 ຄືຜູ້ທີ່ມີສິດກັບເຈົ້າສາວຄືເຈົ້າບ່າວ ແລ້ວໝູ່ເຈົ້າບ່າວໄດ້ຢືນຖ້າຟັງສຽງຂອງ
ເຈົ້າບ່າວຊິມາ ມີຄວາມດີໃຈຫລາຍບັດໄດ້ຍິນສຽງເຈົ້າບ່າວນັ້ນ ຈັ່ງຊັ້ນຄວາມດີໃຈ
ຂອງໂຕເຮົາກໍເຕັມປ່ຽມແລ້ວຢູ່ດຽວນີ້
3:30 ແລ້ວຄວາມສຳຄັນຂອງເພິ່ນນັ້ນ ກໍຕ້ອງເພີ່ມຫລາຍຂຶ້ນ ແຕ່ຄວາມສຳຄັນຂອງ
ເຮົານີ້ກໍຕ້ອງນ້ອຍລົງ

3:31 ຄືຜູ້ເພິ່ນທີ່ລົງມາຈາກເບື້ອງເທິງ ກໍເປັນໃຫຍ່ເໜືອໝົດ ສ່ວນຜູ້ທີ່ມາຈາກໂລກ
ນີ້ ກໍເປັນຂອງທຳມະດາໂລກຊື່ໆ ເວົ້າແຕ່ແນວທາງໂລກນີ້ ແຕ່ສ່ວນຜູ້ທີ່ລົງມາ
ຈາກສະຫວັນນັ້ນ ເພິ່ນເປັນໃຫຍ່ເໜືອໝົດຄູ່ອັນຄູ່ແນວ
3:32 ແລ້ວເພິ່ນຜູ້ນັ້ນກໍເວົ້າຢືນຢັນເຖິງແນວທີ່ເພິ່ນໄດ້ເຫັນໄດ້ຍິນມາ ແຕ່ບໍ່ມີໃຜ
ຍອມຮັບໃນຄຳພະຍານຂອງເພິ່ນ
3:33 ແຕ່ສ່ວນຜູ້ທີ່ຮັບຄຳພະຍານຂອງເພິ່ນ ຜູ້ນັ້ນຢືນຢັນໄດ້ວ່າພຣະເຈົ້າເປັນຜູ້ສັດ
ຈິງ
3:34 ຄືຜູ້ທີ່ພຣະເຈົ້າໃຊ້ມານັ້ນ ເວົ້າແຕ່ຖ້ອຍຄຳຂອງພຣະເຈົ້າ ໂດຍວ່າພຣະເຈົ້າ
ໃຫ້ ພຣະວິນຍານ ໂດຍບໍ່ຈຳກັດເລີຍ
3:35 ຄືພຣະເຈົ້າຜູ້ເປັນພໍ່ກໍຮັກແພງ ພຣະບຸດ ຂອງເພິ່ນ ແລ້ວໄດ້ມອບໝົດຄູ່ອັນຄູ່
ແນວໄວ້ໃນມືຂອງເພິ່ນຢູ່ແລ້ວ
3:36 ແລ້ວສ່ວນຜູ້ທີ່ເຊື່ອວາງໃຈໃນ ພຣະບຸດ ເຂົາມີຊີວິດອັນຕະຫລອດໄປເປັນນິດ
ຢູ່ແລ້ວ ແຕ່ສ່ວນຜູ້ທີ່ບໍ່ໄດ້ເຊື່ອ ພຣະບຸດ ນັ້ນ ເຂົາຊິບໍ່ໄດ້ເຫັນຊີວິດເລີຍ ແຕ່ຄວາມ
ກຶ້ວໂກດອັນຮ້າຍແຮງຂອງພຣະເຈົ້າໄດ້ຕົກຢູ່ກັບເຂົາ

## ໂຢຮັນ ບົດທີ 4

4:1 ຈັ່ງຊັ້ນ ບັດພໍ ພຣະເຢຊູ ຮູ້ວ່າ ຄະນະ ຟາຣີຊາຍ ນັ້ນ ໄດ້ຍິນເຖິງ ພຣະເຢຊູ ວ່າ
ເພິ່ນມີລູກສິດຫລາຍກວ່າ ທັງໄດ້ໃຫ້ການຈຸ່ມນ້ຳຫລາຍກວ່າ ໂຢຮັນ
4:2 (ແມ່ນແຕ່ ພຣະເຢຊູ ເອງ ບໍ່ໄດ້ເຮັດການຮັບຈຸ່ມນ້ຳໃຫ້ໃຜດອກ ມີແຕ່ລູກສິດ
ຂອງເພິ່ນໄດ້ເຮັດ)
4:3 ເພິ່ນຈັ່ງເດີນທາງອອກຈາກແຄວ້ນ ຢູດາຍ ໄປຢູ່ແຄວ້ນ ກາລີເລ ອີກ
4:4 ແຕ່ທາງນັ້ນ ຈຳເປັນເພິ່ນຕ້ອງຜ່ານແຄວ້ນ ຊາມາເຣຍ
4:5 ຈັ່ງຊັ້ນ ເພິ່ນໄປເຖິງເມືອງໜຶ່ງຢູ່ໃນແຄວ້ນ ຊາມາເຣຍ ຊື່ວ່າເມືອງ ຊີຂາ ຢູ່ໃກ້
ທີ່ດິນໜ້ອງທີ່ເຖົ້າ ຢາໂຄບ ເຄີຍຍົກໃຫ້ ໂຢເຊບ ລູກຊາຍຂອງ ລາວ ໃນສະໄໝ
ກ່ອນ
4:6 ແລ້ວກໍມີນ້ຳສ້າງຂອງ ຢາໂຄບ ຢູ່ໃນທີ່ດິນນັ້ນ ບັດນີ້ ພຣະເຢຊູ ໄດ້ເດີນທາງມາ
ເມື່ອຍຫລາຍ ເລີຍໄປນັ່ງຢູ່ໃກ້ນ້ຳສ້າງນັ້ນ ຕອນນັ້ນໃກ້ຊິທ່ຽງແລ້ວ

4:7 ພໍດີມີແມ່ຍິງຊາວ ຊາມາເຣຍ ຄົນໜຶ່ງອອກມາຕັກນໍ້າ ພຣະເຢຊູ ກໍເລີຍເວົ້າກັບ
ນາງນັ້ນວ່າ “ຂໍນໍ້າໃຫ້ເຮົາກິນແໜ່”
4:8 ຕອນນັ້ນ ພວກລູກສິດຂອງເພິ່ນໄດ້ເຂົ້າໄປໃນເມືອງ ໄປຊື້ແນວກິນ
4:9 ນາງນັ້ນໄດ້ເວົ້ານໍາເພິ່ນວ່າ “ເປັນຈັ່ງໃດນາຍເອີຍ ໃນຖານະວ່າເຈົ້າ ຜູ້ເປັນຄົນ
ຢິວ ຈັ່ງຊິມາຂໍກິນນໍ້າຈາກຂ້ອຍຜູ້ເປັນຄົນ ຊາມາເຣຍ ” (ຄືຄົນ ຢິວ ຊິບໍ່ຍອມຄົບ
ກັນກັບພວກ ຊາມາເຣຍ )
4:10 ພຣະເຢຊູ ເລີຍຕອບນາງວ່າ “ຄັ່ນນາງຮູ້ເຖິງຂອງຂວັນທີ່ພຣະເຈົ້າໃຫ້ນັ້ນ
ແລ້ວຮູ້ຈັກຜູ້ທີ່ພວມເວົ້ານໍານາງຢູ່ນີ້ ວ່າ ‘ຂໍນໍ້າໃຫ້ເຮົາກິນແໜ່’ ນາງກໍຊິຂໍຈາກຜູ້-
ນັ້ນກ່ອນ ແລ້ວຜູ້ນັ້ນກໍຊິເອົານໍ້າທິບທີ່ໃຫ້ຊີວິດໃຫ້ເຈົ້າກິນ ໂລດ ”
4:11 ແມ່ຍິງນັ້ນຖາມວ່າ “ນາຍເອີຍ ນາຍຄືບໍ່ມີແນວຕັກ ແລ້ວນໍ້າສ້າງນີ້ກໍເລິກ ຈັ່ງ-
ຊັ້ນນາຍຊິເອົານໍ້າທິບທີ່ໃຫ້ຊີວິດນັ້ນມາແຕ່ໃສ
4:12 ນາຍຊິເປັນໃຫຍ່ສໍາຄັນກວ່າເຖົ້າ ຢາໂຄບ ໄດ້ບໍ້ ຄືຜູ້ທີ່ໃຫ້ນໍ້າສ້າງນີ້ເປັນມໍລະ-
ດົກ ກັບ ລາວ ເອງເຄີຍກິນນໍ້າຈາກສ້າງນີ້ ກັບພວກລູກຊາຍ ລາວ ພ້ອມທັງຝູງ
ແກະຝູງງົວຂອງ ລາວ ນໍາ”
4:13 ແລ້ວ ພຣະເຢຊູ ເລີຍຕອບນາງວ່າ “ຄົນທີ່ກິນນໍ້າຈາກນໍ້າສ້າງນີ້ຍັງຊິຫິວອີກຄື
ເກົ່າ
4:14 ແຕ່ຜູ້ທີ່ກິນນໍ້າແນວເຮົາຊິໃຫ້ນັ້ນ ຊິບໍ່ໄດ້ເກີດຄວາມຫິວອີກຈັກເທື່ອ ຍ້ອນວ່າ
ນໍ້າແນວທີ່ເຮົາຊິໃຫ້ກິນນີ້ຊິກາຍເປັນນໍ້າພຸ ພຸ່ງຂຶ້ນເຖິງຊີວິດອັນຕະຫລອດໄປ-
ເປັນນິດ”
4:15 ແມ່ຍິງນັ້ນກໍເລີຍເວົ້ານໍາ ພຣະເຢຊູ ວ່າ ນາຍເອີຍ ຜູ້ຂ້າຂໍກິນນໍ້ານີ້ແໜ່ທ້ອນ
ເພື່ອຜູ້ຂ້າຊິບໍ່ເກີດຄວາມຫິວອີກ ແລ້ວຊິບໍ່ຕ້ອງມາຕັກນໍ້າຢູ່ນີ້
4:16 ພຣະເຢຊູ ບອກນາງວ່າ “ໃຫ້ໄປເອີ້ນເອົາຜົວຂອງເຈົ້າ ແລ້ວໃຫ້ກັບມາພີ້ເດີ້”
4:17 ແມ່ຍິງນັ້ນກໍຕອບວ່າ “ຜູ້ຂ້າບໍ່ມີຜົວ” ພຣະເຢຊູ ເລີຍບອກນາງນັ້ນວ່າ “ນາງ
ເວົ້າຖືກແລ້ວ ທີ່ວ່າ ‘ບໍ່ມີຜົວ’
4:18 ຍ້ອນວ່ານາງເຄີຍມີຜົວຫ້າຄົນມາແລ້ວ ແລ້ວຜູ້ຊາຍທີ່ຢູ່ນໍານາງຄູ່ມື້ນີ້ບໍ່ແມ່ນ
ຜົວຂອງນາງ ຈັ່ງຊັ້ນນາງຈັ່ງເວົ້າຖືກແລ້ວ”

4:19 ນາງນັ້ນກໍເວົ້ານຳ ພຣະເຢຊູ ວ່າ “ຜູ້ຂ້າເບິ່ງຊິງແລ້ວ ນາຍຄືຊິແມ່ນຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້າ
4:20 ປູ່ທວດຂອງຜູ້ຂ້ານີ້ ເຄີຍຖວາຍບູຊາພຣະເຈົ້າຢູ່ເທິງພູເຂົານີ້ ແຕ່ວ່າພວກຢິວ
ຂອງນາຍເວົ້າວ່າ ຄວນຊິຖວາຍບູຊາຢູ່ເມືອງ ເຢຣູຊາເລັມ ”
4:21 ພຣະເຢຊູ ເລີຍບອກນາງວ່າ “ນາງເຊື່ອເຮົາ ໂລດ ເດີ້ ຈັກໜ່ອຍຊິຮອດຍາມທີ່
ນາງຊິບໍ່ໄດ້ຖວາຍບູຊາພຣະເຈົ້າຜູ້ເປັນພໍ່ຢູ່ເທິງພູເຂົານີ້ ຫລືວ່າໃນເມືອງ ເຢຣູຊາ-
ເລັມ ກໍດີ
4:22 ຄືສ່ວນພວກເຈົ້ານັ້ນ ໄຫວ້ບູຊາຜູ້ທີ່ບໍ່ຮູ້ຈັກ ແຕ່ສ່ວນຄົນ ຢິວ ເຮົານີ້ ເຮົາຮູ້ຈັກຜູ້
ທີ່ເຮົາຖວາຍບູຊາ ຍ້ອນວ່າທາງລອດພົ້ນນັ້ນມາທາງຄົນ ຢິວ ເຮົາ
4:23 ແຕ່ວ່າຊິມີຍາມມາຮອດ ແລ້ວໄດ້ມາຮອດແລ້ວ ເປັນຍາມທີ່ຜູ້ຖວາຍບູຊາທີ່
ແທ້ຈິງ ກໍຊິຖວາຍບູຊາພຣະເຈົ້າຜູ້ເປັນພໍ່ໂດຍຈິດວິນຍານ ກັບໂດຍຄວາມຈິງ
ຍ້ອນວ່າພຣະເຈົ້າຜູ້ເປັນພໍ່ພວມຊອກຫາຄົນແນວນີ້ຖວາຍບູຊາເພິ່ນ
4:24 ຄືພຣະເຈົ້າເປັນວິນຍານ ແລ້ວສ່ວນຄົນທີ່ຖວາຍບູຊາເພິ່ນນັ້ນ ຊິຕ້ອງຖວາຍ
ໂດຍຈິດວິນຍານກັບໂດຍຄວາມຈິງ”
4:25 ບັດນີ້ ແມ່ຍິງນັ້ນເວົ້າວ່າ “ຜູ້ຂ້າຮູ້ຈັກແຕ່ວ່າ ພຣະເມຊີອາ ຊິມາ” (ທີ່ຄົນເອີ້ນ
ກັນວ່າ ພຣະຄຣິດ ) “ແລ້ວບັດເພິ່ນມາຮອດແລ້ວ ເພິ່ນຊິໄດ້ບອກຄົນເຮົາໝົດຄູ່
ອັນຄູ່ແນວ”
4:26 ພຣະເຢຊູ ບອກນາງວ່າ “ເພິ່ນຜູ້ນັ້ນທີ່ພວມເວົ້ານຳນາງແມ່ນເຮົານີ້ເນາະ”
4:27 ຫວ່າງນັ້ນ ພວກລູກສິດຂອງເພິ່ນມາຮອດແລ້ວ ພວກເຂົາກໍເລີຍເປັນຕາງຶດທີ່
ວ່າ ພຣະເຢຊູ ພວມເວົ້ານຳແມ່ຍິງຢູ່ ແຕ່ບໍ່ມີໃຜຖາມສາເຫຕຸນຳເພິ່ນວ່າ “ຕ້ອງ-
ການອີຫຍັງ” ຫລື “ເປັນຫຍັງທີ່ເວົ້າກັບແມ່ຍິງ”
4:28 ສ່ວນແມ່ຍິງນັ້ນ ກໍເລີຍປະໄຫນ້ຳໄວ້ຢູ່ທີ່ນ້ຳສ້າງນັ້ນ ແລ້ວຫລົບເມືອເມືອງ
ບອກພວກຜູ້ຊາຍຢູ່ຫັ້ນວ່າ
4:29 “ໃຫ້ມາເບິ່ງເດີ້ ມີຜູ້ຊາຍຄົນໜຶ່ງທີ່ໄດ້ບອກຂ້ອຍເຖິງໝົດຄູ່ອັນຄູ່ແນວທີ່ຂ້ອຍ
ເຄີຍເຮັດມາ ຜູ້ນີ້ຄືຊິແມ່ນ ພຣະຄຣິດ ຊັ້ນບໍ້”
4:30 ບັດນີ້ ພວກເຂົາເລີຍພາກັນອອກຈາກເມືອງ ໄປຫາ ພຣະເຢຊູ

4:31 ພໍດີໃນຫວ່າງນັ້ນ ພວກລູກສິດເຊີນເພິ່ນວ່າ “ມາກິນເຂົ້າຊະ ອາຈານ”
4:32 ພຣະເຢຊູ ຕອບເຂົາວ່າ “ເຮົາມີອາຫານທີ່ຊິກິນຊຶ່ງພວກເຈົ້າບໍ່ຮູ້ຈັກນຳ”
4:33 ຈັ່ງຊັ້ນ ພວກລູກສິດເລີຍຖາມກັນວ່າ “ແມ່ນໃຜເອົາອີຫຍັງມາໃຫ້ເພິ່ນກິນນໍ້”
4:34 ພຣະເຢຊູ ບອກພວກລູກສິດວ່າ “ອາຫານການກິນຂອງເຮົາກໍຄືການເຮັດ
ຕາມຈຸດປະສົງຂອງຜູ້ເພິ່ນທີ່ໃຊ້ເຮົາມາ ແລ້ວເຮັດງານຂອງເພິ່ນໃຫ້ສຳເລັດ
4:35 ບໍ່ແມ່ນບໍ້ ທີ່ພວກເຈົ້າມີ ສຸພາສິດ ວ່າ ‘ຍັງອີກສີ່ເດືອນຈັ່ງຊິຮອດຍາມເກັບກ່ຽວ’
ແຕ່ ນີ້ແຫລະ ເຮົາບອກພວກເຈົ້າໃຫ້ຫລຽວເບິ່ງທາງທົ່ງນາ ມັນເຫລືອງພ້ອມຊິ
ເກັບກ່ຽວໄດ້ແລ້ວ
4:36 ແລ້ວຜູ້ທີ່ເກັບກ່ຽວນັ້ນໄດ້ຮັບຄ່າຕອບແທນ ຄືເກັບກ່ຽວຜົນທີ່ຊິບັນລຸເຖິງຊີວິດ
ອັນຕະຫລອດໄປເປັນນິດ ຊຶ່ງວ່າຜູ້ທີ່ຫວ່ານລົງ ກັບຜູ້ທີ່ເກັບກ່ຽວ ຊິໄດ້ມີຄວາມ
ຊົມຊື່ນຍິນດີນຳກັນ
4:37 ຄື ສຸພາສິດ ນີ້ມີຄວາມຈິງທີ່ວ່າ ‘ຜູ້ໜຶ່ງໄດ້ຫວ່ານລົງ ແລ້ວອີກຜູ້ໜຶ່ງໄດ້ເກັບ-
ກ່ຽວ’
4:38 ຄືເຮົາໄດ້ໃຊ້ພວກເຈົ້າອອກໄປເກັບກ່ຽວໃນແນວທີ່ພວກເຈົ້າບໍ່ໄດ້ລົງມືເສຍ
ແຮງ ແຕ່ຄົນອື່ນໄດ້ເສຍແຮງເຮັດ ແລ້ວພວກເຈົ້າກໍໄດ້ເຂົ້າຮ່ວມງານກັບເຂົາ”
4:39 ແລ້ວສ່ວນພວກຊາວ ຊາມາເຣຍ ມີຫລາຍຄົນໃນເມືອງນັ້ນທີ່ເຊື່ອວາງໃຈໃນ
ພຣະເຢຊູ ຍ້ອນຄຳພະຍານຂອງແມ່ຍິງຜູ້ນັ້ນ ທີ່ເປັນພະຍານໃຫ້ເຂົາຟັງວ່າ
“ເພິ່ນບອກຂ້ອຍເຖິງໝົດຄູ່ອັນຄູ່ແນວທີ່ຂ້ອຍເຄີຍເຮັດມາ”
4:40 ຈັ່ງຊັ້ນ ຕອນພວກຊາວ ຊາມາເຣຍ ໄດ້ອອກໄປຫາ ພຣະເຢຊູ ຢູ່ນໍ້າສ້າງນັ້ນ
ເຂົາໄດ້ຊວນເພິ່ນໄປພັກຢູ່ນຳພວກເຂົາ ເພິ່ນກໍເລີຍໄປພັກຢູ່ນັ້ນສອງມື້
4:41 ແລ້ວມີຊາວ ຊາມາເຣຍ ອີກຫລາຍຄົນໄດ້ເຊື່ອວາງໃຈໃນເພິ່ນ ຍ້ອນຖ້ອຍຄຳ
ຂອງເພິ່ນ
4:42 ແລ້ວພວກຊາວ ຊາມາເຣຍ ທີ່ໄດ້ເຊື່ອນັ້ນ ບອກແມ່ຍິງນັ້ນວ່າ “ບັດນີ້ ພວກ
ເຮົາໄດ້ມາເຊື່ອໃນເພິ່ນແລ້ວ ບໍ່ແມ່ນຍ້ອນຄຳພະຍານຂອງເຈົ້າ ແຕ່ຍ້ອນວ່າພວກ
ເຮົາໄດ້ຍິນຖ້ອຍຄຳຂອງເພິ່ນເອງ ຈັ່ງຮູ້ຈັກວ່າເພິ່ນເປັນ ພຣະຄຣິດ ພຣະຜູ້ໂຜດ
ຂອງໂລກນີ້ອີຫລີ”

4:43 ຢູ່ມາອີກສອງມື້ ພຣະເຢຊູ ໄດ້ອອກຈາກແຄວ້ນ ຊາມາເຣຍ ໄປ ແລ້ວກໍເຂົ້າ-
ໄປໃນແຄວ້ນ ກາລີເລ ຕໍ່
4:44 ຍ້ອນວ່າ ພຣະເຢຊູ ເອງເຄີຍເວົ້າວ່າຜູ້ເປັນປາກເປັນສຽງບໍ່ຄ່ອຍໄດ້ກຽດໃນ
ບ້ານເກີດເມືອງນອນຂອງໂຕເອງ
4:45 ບັດນີ້ ພໍ ພຣະເຢຊູ ໄປຮອດ ກາລີເລ ແລ້ວ ຊາວ ກາລີເລ ໄດ້ພາກັນຕ້ອນຮັບ
ເພິ່ນຢ່າງດີ ຍ້ອນວ່າພວກເຂົາໄດ້ເຫັນໝົດທຸກແນວທີ່ເພິ່ນໄດ້ເຮັດ ຢູ່ງານລ້ຽງສະ-
ຫລອງມື້ກູ້ຊາດໃນເມືອງ ເຢຣູຊາເລັມ ຍ້ອນພວກເຂົາໄປຮ່ວມງານນັ້ນນໍາ
4:46 ແລ້ວ ພຣະເຢຊູ ເລີຍໄປບ້ານ ການາ ອີກໃນແຄວ້ນ ກາລີເລ ໝ້ອງທີ່ເພິ່ນໄດ້
ປ່ຽນນໍ້າບໍ່ໃຫ້ເປັນເຫລົ້າອະງຸ່ນດອງມາກ່ອນ ແລ້ວໃນເມືອງ ກາເປນາອູມ ນັ້ນ ໄດ້
ມີຫົວໜ້າຄົນໜຶ່ງທີ່ມີລູກຊາຍປ່ວຍໜັກ
4:47 ພໍ ລາວ ໄດ້ຍິນວ່າ ພຣະເຢຊູ ໄດ້ເດີນທາງອອກຈາກແຄວ້ນ ຢູດາຍ ເຂົ້າມາ
ຮອດແຄວ້ນ ກາລີເລ ແລ້ວ ລາວ ເລີຍໄປຂໍຮ້ອງກັບເພິ່ນໃຫ້ໄປປົວລູກຊາຍຂອງ
ລາວ ຍ້ອນວ່າລູກຊາຍຂອງ ລາວ ປ່ວຍໜັກໃກ້ຊິຕາຍແລ້ວ
4:48 ແລ້ວ ພຣະເຢຊູ ບອກ ລາວ ວ່າ “ນອກຈາກຄົນພວກເຈົ້າເຫັນເຄື່ອງໝາຍອັນ
ສໍາຄັນ ກັບ ເຫດການອັດສະຈັນ ພວກເຈົ້າກໍບໍ່ຍອມເຊື່ອເລີຍ”
4:49 ແລ້ວຫົວໜ້ານັ້ນກໍຂໍຮ້ອງກັບ ພຣະເຢຊູ ວ່າ “ນາຍເອີຍ ໃຫ້ມາຊ່ອຍແໜ່ທ້ອນ
ກ່ອນລູກຊາຍຜູ້ຂ້າຊິຕາຍ”
4:50 ພຣະເຢຊູ ບອກ ລາວ ວ່າ ໃຫ້ຄືນເມືອຊະເດີ້ ລູກຊາຍຂອງເຈົ້າຊິບໍ່ຕາຍ ເຂົາ
ເຊົາເປັນດີແລ້ວ ຫົວໜ້ານັ້ນເຊື່ອໃນຖ້ອຍຄໍາທີ່ ພຣະເຢຊູ ບອກ ລາວ ແລ້ວກໍ
ຫລົບເມືອ
4:51 ຕອນທີ່ ລາວ ພວມເມືອຕາມທາງຢູ່ນັ້ນ ພວກຄົນໃຊ້ຂອງລາວກໍອອກມາຫາ
ແລ້ວບອກວ່າ ນາຍເອີຍ ລູກຊາຍຂອງນາຍຍັງມີຊີວິດຢູ່ ເຊົາເປັນດີແລ້ວ
4:52 ຫົວໜ້າເລີຍຖາມພວກຄົນໃຊ້ເຖິງຍາມທີ່ລູກຊາຍຂອງ ລາວ ໄດ້ຫາຍດີ ພວກ
ຄົນໃຊ້ຕອບວ່າ “ ອາການ ໄຂ້ໄດ້ເຊົາຕັ້ງແຕ່ບ່າຍໂມງມື້ວານນີ້”

4:53 ບັດນີ້ ຜູ້ເປັນພໍ່ຈັ່ງຮູ້ວ່າ ເປັນຍາມດຽວກັນກັບທີ່ ພຣະເຢຊູ ບອກ ລາວ ວ່າ
"ລູກຊາຍຂອງເຈົ້າເຊົາເປັນດີ ຍັງມີຊີວິດຢູ່" ແລ້ວນາຍນັ້ນກໍໄດ້ເຊື່ອວາງໃຈໃນ
ພຣະເຢຊູ ໝົດທັງເຮືອນຂອງ ລາວ ນໍາ
4:54 ນີ້ເນາະ ກໍເປັນເທື່ອທີ່ສອງທີ່ ພຣະເຢຊູ ໄດ້ເຮັດເຄື່ອງໝາຍອັນສໍາຄັນ ຫລັງ
ຈາກທີ່ເພິ່ນໄດ້ເດີນທາງອອກມາຈາກແຄວ້ນ ຢູດາຍ ເຂົ້າໄປແຄວ້ນ ກາລີເລ ອີກ

# ໂຢຮັນ ບົດທີ 5

5:1 ຫລັງຈາກນັ້ນ ໄດ້ມີງານລ້ຽງສະຫລອງຂອງພວກຢິວງານໜຶ່ງ ແລ້ວ ພຣະເຢຊູ
ກໍເລີຍຂຶ້ນໄປເມືອງ ເຢຣູຊາເລັມ
5:2 ໃນ ເຢຣູຊາເລັມ ນັ້ນ ມີສະນໍ້າຢູ່ສະໜຶ່ງ ຢູ່ຂ້າງປະຕູທີ່ເອີ້ນກັນວ່າປະຕູແກະ
ໜ້ອງນັ້ນພາສາເຮັບເຣີເອີ້ນວ່າ ເບັດຊະທາ ຊຶ່ງມີສາລາຢູ່ຫ້າຫລັງອ້ອມລ້ອມຢູ່
5:3 ແລ້ວໃນສາລາຊຸມນີ້ມີຄົນນອນປ່ວຍຢູ່ລະເນລະນາດ ມີຄົນຕາບອດ ຄົນພິ-
ການເປັນງ່ອຍ ຄົນເປັນອໍາມະພາດ ທີ່ພາກັນຄອຍຖ້າໃຫ້ນໍ້າບຸ້ນ
5:4 ໂດຍວ່າຫາລາງເທື່ອມີເທວາດາລົງມາກວນນໍ້າໃນສະນັ້ນໃຫ້ບຸ້ນ ແລ້ວຜູ້ທີ່ລົງ
ນໍ້າກ່ອນໝູ່ກໍຊິເຊົາ ອາການ ທີ່ເປັນມານັ້ນ
5:5 ບັດນີ້ມີຜູ້ຊາຍຜູ້ໜຶ່ງຢູ່ນັ້ນ ທີ່ມີ ອາການ ປ່ວຍເປັນມາສາມສິບແປດປີແລ້ວ
5:6 ບັດ ພຣະເຢຊູ ເຫັນຜູ້ຊາຍຜູ້ນັ້ນນອນຢູ່ຫັ້ນ ແລ້ວກໍຮູ້ຈັກວ່າເຂົາເຄີຍຢູ່ໃນສະ-
ພາບນີ້ມາແຕ່ດົນນານ ເພິ່ນເລີຍເວົ້າກັບເຂົາວ່າ "ເຈົ້າຢາກເຊົາ ຫາຍດີຢູ່ບໍ້"
5:7 ຄົນເຈັບນັ້ນກໍຕອບວ່າ "ນາຍເອີຍ ຕອນນໍ້າພວມບຸ້ນຂຶ້ນມານັ້ນ ບໍ່ມີໃຜຊ່ອຍ
ເອົາຜູ້ຂ້າລົງໄປໃນສະ ແລ້ວບັດຜູ້ຂ້າພະຍາຍາມລົງນໍ້າເອງ ພໍດີມີຄົນອື່ນມາ
ສອດໃສ່ລົງນໍ້າກ່ອນຜູ້ຂ້າ"
5:8 ພຣະເຢຊູ ເລີຍບອກເຂົາວ່າ "ໃຫ້ເຈົ້າລຸກຂຶ້ນຊະເດ໊ ເກັບສາດເສື່ອຂອງເຈົ້າ
ແລ້ວຍ່າງໄປເລີຍ"
5:9 ແລ້ວພໍດີ ຜູ້ຊາຍຜູ້ນັ້ນເຊົາເປັນດີກັບໜ້ອງ ລຸກຂຶ້ນເກັບສາດເກັບເສື່ອແລ້ວຍ່າງ
ໄປເລີຍ ພໍດີມື້ນັ້ນເປັນວັນຊະບາໂຕ ມື້ຢຸດພັກງານຂອງພວກຢິວ

5:10 ບັດນີ້ ພວກຜູ້ນຳຂອງຄົນ ຢິວ ກໍເລີຍພາກັນທ້ວງຜູ້ຊາຍຜູ້ທີ່ຫາກໍເຊົາປ່ວຍນັ້ນ
ວ່າ ມື້ນີ້ເປັນວັນຊະບາໂຕ ແມ່ນມື້ຢຸດພັກງານຂອງພວກເຮົາເດີ້ ຊິຫອບສາດຫອບ
ເສື່ອໄປໃສມາໃສມັນກໍຜິດກົດບັນຍັດເຮົາເດ້
5:11 ຜູ້ຊາຍຜູ້ນັ້ນກໍຕອບພວກເຂົາວ່າ ເພິ່ນຜູ້ນັ້ນທີ່ໄດ້ປົວຂ້ອຍໃຫ້ເຊົາປ່ວຍເປັນດີ
ແລ້ວຈັ່ງສັ່ງຂ້ອຍວ່າ “ໃຫ້ເກັບສາດເກັບເສື່ອແລ້ວຍ່າງໄປເລີຍ”
5:12 ບັດນີ້ ພວກເຂົາພາກັນຖາມວ່າ “ແມ່ນໃຜສັ່ງເຈົ້າວ່າ ‘ໃຫ້ເກັບສາດເກັບເສື່ອ
ແລ້ວຍ່າງໄປເລີຍ’ ນັ້ນ”
5:13 ແຕ່ວ່າ ຜູ້ຊາຍຜູ້ນັ້ນທີ່ໄດ້ຮັບການປົວຈາກ ພຣະເຢຊູ ບໍ່ຮູ້ຈັກວ່າແມ່ນໃຜປົວ
ເຂົາ ຍ້ອນວ່າ ພຣະເຢຊູ ໄດ້ອອກໄປຫລົບໃນໝູ່ຄົນທັງຫລາຍຢູ່ຫັ້ນ
5:14 ແລ້ວຕອນຫລັງນັ້ນ ພຣະເຢຊູ ກໍພໍ້ຜູ້ຊາຍຜູ້ນັ້ນໃນວິຫານອີກ ແລ້ວໄດ້ເວົ້າກັບ
ເຂົາວ່າ “ນີ້ແຫລະ ເຈົ້າໄດ້ເຊົາປ່ວຍເປັນດີແລ້ວ ຕໍ່ໄປນີ້ຢ່າສູ່ເຮັດບາບອີກເດີ້ ບໍ່
ຊັ້ນ ເຈົ້າ ອາດ ຊິເປັນອີຫຍັງໜັກກວ່ານີ້ອີກ”
5:15 ແລ້ວຜູ້ຊາຍຜູ້ນັ້ນ ໄດ້ອອກໄປບອກພວກຜູ້ນຳຂອງຄົນ ຢິວ ວ່າ ແມ່ນ ພຣະ-
ເຢຊູ ເອງໄດ້ປົວເຂົາໃຫ້ເຊົາປ່ວຍເປັນດີ
5:16 ຍ້ອນເຫດນີ້ເນາະ ທີ່ພວກຜູ້ນຳຂອງຄົນ ຢິວ ຈັ່ງໄດ້ບຽດບຽນຂົ່ມເຫງ ພຣະເຢ-
ຊູ ແລ້ວກໍໄດ້ຫາທາງທີ່ຊິຈັດການຂ້າເພິ່ນ ຍ້ອນວ່າ ພຣະເຢຊູ ໄດ້ປົວຄົນເຈັບໃນ
ວັນຊະບາໂຕ ມື້ຢຸດພັກງານຂອງພວກຢິວນັ້ນ
5:17 ແຕ່ ພຣະເຢຊູ ໄດ້ບອກເຂົາວ່າ “ພຣະເຈົ້າຜູ້ເປັນພໍ່ເຮົາ ໄດ້ເຮັດການງານຈົນ
ຮອດບັດນີ້ ແລ້ວສ່ວນເຮົາ ກໍພວມຊິເຮັດການງານຄືກັນ”
5:18 ໂດຍເຫດນີ້ເນາະ ພວກຜູ້ນຳຂອງຄົນ ຢິວ ໄດ້ຕັ້ງໃຈຫລາຍຂຶ້ນທີ່ຊິຂ້າ ພຣະ-
ເຢຊູ ໃຫ້ໄດ້ ຍ້ອນວ່າເພິ່ນບໍ່ຝ່າຝືນກົດລະບຽບວັນຊະບາໂຕ ມື້ຢຸດພັກງານຂອງ
ພວກເຂົານັ້ນແນວດຽວ ແຕ່ໄດ້ເວົ້າວ່າ ພຣະເຈົ້າເປັນພໍ່ຂອງເຂົາ ຊຶ່ງເປັນການຍົກ
ໂຕຂຶ້ນໃຫ້ທໍ່ທຽມກັບພຣະເຈົ້າ
5:19 ພຣະເຢຊູ ເລີຍບອກພວກເຂົາວ່າ “ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າ
ພຣະບຸດ ບໍ່ສາມາດເຮັດອີຫຍັງດ້ວຍໂຕເອງ ມີແຕ່ວ່າ ແນວທີ່ເພິ່ນເຫັນພຣະເຈົ້າຜູ້
ເປັນພໍ່ເຮັດ ພຣະບຸດ ກໍຊິເຮັດແນວນັ້ນຄືກັນ

5:20 ຄື ພຣະເຈົ້າຜູ້ເປັນພໍ່ຮັກແພງ ພຣະບຸດ ແລ້ວເປີດເຜີຍຄູ່ແນວທີ່ພໍ່ເຮັດໃຫ້
ພຣະບຸດ ແລ້ວພໍ່ຍັງຊິເປີດເຜີຍການງານຍິ່ງໃຫຍ່ກວ່ານັ້ນອີກໃຫ້ ພຣະບຸດ ເພື່ອ
ພວກເຈົ້າຊິໄດ້ແປກໃຈເປັນຕາງຶດ
5:21 ໂດຍວ່າ ພຣະເຈົ້າຜູ້ເປັນພໍ່ເຮັດໃຫ້ຄົນຕາຍກັບຄືນມີຊີວິດໄດ້ສໍ່າໃດ ພຣະ-
ບຸດ ກໍໃຫ້ຊີວິດກັບຜູ້ທີ່ເພິ່ນຕ້ອງການໄດ້ສໍ່ານັ້ນ ຕາມຈຸດປະສົງຂອງເພິ່ນ
5:22 ໂດຍວ່າ ພຣະເຈົ້າຜູ້ເປັນພໍ່ນັ້ນ ບໍ່ໄດ້ຕັດສິນລົງໂທດຜູ້ໃດເລີຍ ແຕ່ໄດ້ມອບ
ການຕັດສິນລົງໂທດນັ້ນ ໄວ້ໃຫ້ ພຣະບຸດ ໝົດ
5:23 ເພື່ອວ່າຄູ່ຄົນຊິຖວາຍກຽດໃຫ້ກັບ ພຣະບຸດ ຄືກັນກັບທີ່ເຂົາເຄີຍຖວາຍກຽດ
ໃຫ້ກັບພຣະເຈົ້າຜູ້ເປັນພໍ່ ຄືຜູ້ໃດທີ່ບໍ່ໄດ້ຖວາຍກຽດໃຫ້ກັບ ພຣະບຸດ ນັ້ນ ສໍ່າກັບ
ວ່າບໍ່ໄດ້ຖວາຍກຽດໃຫ້ກັບຜູ້ເປັນພໍ່ ຜູ້ທີ່ໃຊ້ ພຣະບຸດ ມາ
5:24 ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຜູ້ທີ່ຮັບຟັງຖ້ອຍຄໍາຂອງເຮົາ ກັບເຊື່ອ
ວາງໃຈໃນຜູ້ເພິ່ນທີ່ໃຊ້ເຮົາມາ ຜູ້ນັ້ນມີຊີວິດອັນຕະຫລອດໄປເປັນນິດ ແລ້ວຊິບໍ່
ໄດ້ຖືກການຕັດສິນລົງໂທດເລີຍ ແຕ່ໄດ້ຜ່ານພົ້ນຈາກສະພາບຕາຍ ມາສູ່ຊີວິດ
ແລ້ວ
5:25 ແລ້ວເຮົາຊິບອກພວກເຈົ້າຕາມຊື່ອີກວ່າ ຊິມີຍາມມາຮອດ ແລ້ວບັດນີ້ໄດ້ມາ
ຮອດແລ້ວ ທີ່ວ່າຄົນຕາຍຊິໄດ້ຍິນສຽງ ພຣະບຸດ ຂອງພຣະເຈົ້າ ແລ້ວສ່ວນຜູ້ໃດທີ່
ຮັບຟັງສຽງເອີ້ນນັ້ນ ເຂົາຊິໄດ້ຊີວິດ
5:26 ໂດຍວ່າ ພຣະເຈົ້າຜູ້ເປັນພໍ່ມີຊີວິດດໍາລົງຢູ່ໃນເພິ່ນເອງສໍ່າໃດ ເພິ່ນກໍມອບໃຫ້
ພຣະບຸດ ມີຊີວິດດໍາລົງຢູ່ໃນໂຕເອງສໍ່ານັ້ນ
5:27 ແລ້ວໄດ້ມອບສິດອໍານາດໃຫ້ ພຣະບຸດ ໃນການຕັດສິນລົງໂທດນັ້ນ ໂດຍໃນ
ຖານະວ່າເພິ່ນເປັນບຸດມະນຸດ
5:28 ຈັ່ງຊັ້ນ ຢ່າສູ່ຄຶດແປກໃຈຫລາຍໃນເລື່ອງນີ້ ຍ້ອນວ່າຊິມີຍາມໜຶ່ງມາຮອດ ທີ່
ວ່າຄູ່ຄົນທີ່ຕາຍໄປແລ້ວນັ້ນ ຊິໄດ້ຍິນສຽງເອີ້ນຂອງ ພຣະບຸດ
5:29 ແລ້ວຊິໄດ້ເປັນຂຶ້ນມາອີກ ຄືຜູ້ທີ່ເຮັດແນວມັນຖືກມັນດີນັ້ນ ກໍຊິໄດ້ເປັນຂຶ້ນມາ-
ສູ່ຊີວິດ ແຕ່ຄົນທີ່ເຮັດແນວຊົ່ວແນວບໍ່ດີ ກໍຊິເປັນຂຶ້ນມາສູ່ການຕັດສິນລົງໂທດ

5:30 ສ່ວນເຮົານີ້ບໍ່ສາມາດເຮັດອີຫຍັງໄດ້ໂດຍໂຕເອງ ແຕ່ເຮົາໃຫ້ການຕັດສິນຕາມ
ທີ່ເຮົາໄດ້ຍິນມາ ແລ້ວການຕັດສິນຂອງເຮົາເປັນທຳ ຍ້ອນວ່າເຮົາບໍ່ໄດ້ມຸ້ງໝາຍ
ຕາມຈຸດປະສົງຂອງເຮົາເອງ ແຕ່ມຸ້ງໝາຍຕາມຈຸດປະສົງຂອງພຣະເຈົ້າຜູ້ເປັນພໍ່
ຜູ້ເພິ່ນທີ່ໃຊ້ເຮົາມາ
5:31 ຄັນວ່າ ເຮົາຊິອ້າງຄຳພະຍານໃຫ້ໂຕເຮົາເອງ ຄຳພະຍານຂອງເຮົານັ້ນຖືວ່າບໍ່
ຖືກຕ້ອງໃຊ້ການບໍ່ໄດ້
5:32 ແຕ່ວ່າ ຍັງມີອີກຜູ້ໜຶ່ງທີ່ໄດ້ເປັນພະຍານໃຫ້ເຮົາ ແລ້ວເຮົາຮູ້ຈັກວ່າ ຄຳພະ-
ຍານເຖິງເຮົາທີ່ຜູ້ນັ້ນໃຫ້ ຖືວ່າຖືກຕ້ອງໃຊ້ໄດ້
5:33 ສ່ວນພວກເຈົ້ານີ້ ໄດ້ໃຊ້ຄົນໄປຫາ ໂຢຮັນ ຜູ້ໃຫ້ຮັບການຈຸ່ມນ້ຳນັ້ນ ແລ້ວ
ລາວ ເປັນພະຍານເຖິງຄວາມຈິງ
5:34 ແຕ່ເຮົາບໍ່ໄດ້ຮັບຄຳພະຍານຂອງຄົນ ພຽງວ່າ ເຮົາຮັບໃນກຳລະນີນີ້ເພື່ອພວກ
ເຈົ້າຊິລອດພົ້ນ
5:35 ໂຢຮັນ ນີ້ ຄືເປັນຕະກຽງທີ່ພວມລຸກອອກແສງສະຫວ່າງ ແລ້ວພວກເຈົ້າຍິນດີ
ທີ່ຊິຍອມຮັບໃນແສງສະຫວ່າງຂອງ ລາວ ໃນຊົ່ວລະຍະໜຶ່ງ
5:36 ແຕ່ວ່າ ເຮົາມີຫຼັກຖານພະຍານອີກແນວໜຶ່ງທີ່ສຳຄັນຍິ່ງກວ່າຄຳພະຍານຂອງ
ໂຢຮັນ ອີກ ຄືການງານທີ່ພຣະເຈົ້າຜູ້ເປັນພໍ່ໄດ້ມອບໄວ້ໃຫ້ເຮົາເຮັດເຖິງສຳເລັດ
ນັ້ນ—ຄືຜົນງານທີ່ເຮົາພວມເຮັດຢູ່ນີ້ເນາະ—ໄດ້ເປັນຫຼັກຖານພະຍານເຖິງເຮົາວ່າ
ພຣະເຈົ້າຜູ້ເປັນພໍ່ໄດ້ໃຊ້ເຮົາມາອີຫລີ
5:37 ແລ້ວພຣະເຈົ້າຜູ້ເປັນພໍ່ ຜູ້ທີ່ໄດ້ໃຊ້ເຮົາມານີ້ ໄດ້ເປັນພະຍານເຖິງເຮົານຳ ແຕ່
ພວກເຈົ້າບໍ່ເຄີຍຮັບຟັງສຽງຫລືເຫັນຮູບຮ່າງຂອງໂຕເພິ່ນຈັກເທື່ອ
5:38 ແລ້ວຖ້ອຍຄຳຂອງເພິ່ນບໍ່ໄດ້ສະຖິດຢູ່ໃນໃຈຂອງພວກເຈົ້າດອກ ຍ້ອນວ່າ
ພວກເຈົ້າບໍ່ເຊື່ອວາງໃຈໃນໂຕເຮົາ ຜູ້ທີ່ເພິ່ນໄດ້ໃຊ້ມາ
5:39 ພວກເຈົ້າພາກັນຄົ້ນຫາໃນ ພຣະຄຳ ຄຶດວ່າຊິໄດ້ຮັບເຄດລັບຂອງຊີວິດອັນ-
ຕະຫລອດໄປເປັນນິດໃນຂໍ້ຄວາມນັ້ນໄດ້ ແລ້ວຂໍ້ຄວາມນັ້ນ ໄດ້ເປັນພະຍານຫຼັກ-
ຖານທີ່ເວົ້າເຖິງໂຕເຮົານີ້ເນາະ
5:40 ແຕ່ພວກເຈົ້າບໍ່ຍອມທີ່ຊິມາຫາເຮົາ ເພື່ອຊິໄດ້ມີຊີວິດ

5:41 ສ່ວນເຮົານີ້ ບໍ່ໄດ້ຮັບກຽດຈາກຄົນດອກ
5:42 ແລ້ວເຮົາຮູ້ຈັກຈິດໃຈຂອງພວກເຈົ້າ ວ່າພວກເຈົ້າບໍ່ມີຄວາມຮັກແບບຂອງ
ພຣະເຈົ້າສະຖິດຢູ່ໃນພວກເຈົ້າເລີຍ
5:43 ຄືສ່ວນເຮົານີ້ ໄດ້ມາໃນນາມຂອງພຣະເຈົ້າຜູ້ເປັນພໍ່ເຮົາ ແລ້ວພວກເຈົ້າບໍ່ໄດ້
ຕ້ອນຮັບເຮົາເລີຍ ແຕ່ຄັນມີຜູ້ອື່ນມາໃນນາມຂອງໂຕເຂົາເອງ ພວກເຈົ້າກໍຊິຕ້ອນ-
ຮັບເຂົາເອົາ ໂລດ
5:44 ຈັ່ງຊັ້ນ ພວກເຈົ້າຊິຮັບເຊື່ອໄດ້ຈັ່ງໃດ ຜູ້ທີ່ຊອກຫາຍົດຫາກຽດຊຶ່ງກັນແລະກັນ
ແລ້ວບໍ່ໄດ້ສະແຫວງຫາກຽດແບບທີ່ມາຈາກພຣະເຈົ້າ
5:45 ແຕ່ຢ່າຄຶດວ່າເຮົາຊິຟ້ອງຮ້ອງໃສ່ພວກເຈົ້າຕໍ່ພຣະເຈົ້າຜູ້ເປັນພໍ່ດອກ ຍ້ອນມີຜູ້
ໜຶ່ງທີ່ຟ້ອງໃສ່ພວກເຈົ້າແລ້ວ ຄື ເຖົ້າ ໂມເຊ ນັ້ນເນາະ ຊຶ່ງເປັນຜູ້ທີ່ພວກເຈົ້າເຊື່ອຖື
ກັນ
5:46 ຄື ຄັນວ່າພວກເຈົ້າໄດ້ເຊື່ອ ໂມເຊ ນັ້ນອີຫລີ ພວກເຈົ້າຄືຊິເຊື່ອເຮົານໍາ ຍ້ອນ
ວ່າ ໂມເຊ ນີ້ໄດ້ຂຽນເວົ້າເຖິງເຮົາ
5:47 ແຕ່ວ່າ ຄັນພວກເຈົ້າບໍ່ເຊື່ອຕາມຂໍ້ຂຽນຂອງ ລາວ ພວກເຈົ້າກໍຊິເຊື່ອໃນ
ຖ້ອຍຄໍາທີ່ເຮົາໄດ້ຈັ່ງໃດຊັ້ນ”

## ໂຢຮັນ ບົດທີ 6

6:1 ຫລັງຈາກນັ້ນແລ້ວ ພຣະເຢຊູ ເລີຍຂ້າມທະເລສາບ ກາລິເລ ທີ່ເອີ້ນກັນວ່າ
ທະເລຕິເບເຣຍ
6:2 ບັດນີ້ ໄດ້ມີຄົນຫລວງຫລາຍພາກັນຕິດຕາມ ພຣະເຢຊູ ໄປ ຍ້ອນເຂົາເຄີຍເຫັນ
ເຄື່ອງໝາຍອັນສໍາຄັນທີ່ ພຣະເຢຊູ ເຮັດ ຕອນທີ່ເພິ່ນໄດ້ປົວຄົນເຈັບຄົນເປັນໃຫ້
ເຊົາເປັນດີ
6:3 ແລ້ວ ພຣະເຢຊູ ໄດ້ຂຶ້ນໄປຢູ່ເທິງພູເຂົາ ຈັ່ງໄດ້ນັ່ງພັກກັບລູກສິດຂອງເພິ່ນຢູ່ນັ້ນ
6:4 ບັດນີ້ມັນໃກ້ຊິຮອດເທດສະການລ້ຽງສະຫລອງການກູ້ຊາດຂອງຄົນ ຢິວ ແລ້ວ
6:5 ບັດນີ້ ພຣະເຢຊູ ຫລຽວເບິ່ງ ເຫັນມີຄົນຫລວງຫລາຍພາກັນຫລັ່ງມາຫາເພິ່ນ
ເພິ່ນເລີຍເວົ້າກັບ ຟີລິບ ວ່າ “ເຮົາຊິໄປຊື້ແນວກິນຢູ່ໃສນໍ້ ເພື່ອຄົນພວກນີ້ຊິມີກິນ”

6:6 ແຕ່ ພຣະເຢຊູ ເວົ້າຈັ່ງຊີ້ເພື່ອຊິທົດສອບ ຟີລິບ ເບິ່ງ ຄືເພິ່ນຮູ້ແລ້ວວ່າເພິ່ນຊິ
ເຮັດຈັ່ງໃດ
6:7 ຟີລິບ ເລີຍຕອບວ່າ “ຂະໜາດເງິນສອງຮ້ອຍຫລຽນເດນາຣິອົນ ຍັງບໍ່ພໍທີ່ຊິຊື້
ແນວກິນໃຫ້ມັນພໍຄູ່ຄົນໄດ້ ແມ່ນແຕ່ເຂົາຊິກິນຜູ້ລະນ້ອຍໆ ນ້ອຍໆ ກໍຢ່າ”
6:8 ລູກສິດ ພຣະເຢຊູ ຜູ້ໜຶ່ງຊື່ ອັນເດອາ ນ້ອງຊາຍຂອງ ຊີໂມນເປໂຕ ນັ້ນ ໄດ້ເວົ້າ
ກັບເພິ່ນວ່າ
6:9 ມີເດັກຜູ້ຊາຍຄົນໜຶ່ງຢູ່ນີ້ ມີເຂົ້າຈີ່ເຂົ້າບາເລຢູ່ຫ້າກ້ອນ ກັບປາສອງໂຕ ແຕ່ຄົນ
ຫລາຍຄືນີ້ ມັນຊິພໍບໍ້ສໍ່ານີ້
6:10 ບັດນີ້ ພຣະເຢຊູ ກໍສັ່ງລູກສິດວ່າ “ໃຫ້ພວກປະຊາຊົນນັ່ງລົງເລີຍ” ຄືວ່າໝ້ອງ
ນັ້ນມີຫຍ້າຫລາຍ ພວກຄົນເລີຍພາກັນນັ່ງລົງ ຈຳນວນຜູ້ຊາຍກໍປະມານຫ້າພັນ
ຄົນ
6:11 ແລ້ວ ພຣະເຢຊູ ຮັບເອົາເຂົ້າຈີ່ຂຶ້ນມາ ບັດເພິ່ນຂອບໃຈພຣະເຈົ້າແລ້ວ ກໍໄດ້ບິ
ອອກເປັນກ້ອນໆ ແລ້ວຍື່ນໃຫ້ພວກລູກສິດແຈກໃຫ້ຜູ້ຄົນທີ່ນັ່ງຢູ່ນັ້ນ ແລ້ວເອົາປາ
ມາເຮັດແນວດຽວກັນ ແຈກໃຫ້ຄົນກິນອີ່ມ ຕາມທີ່ຢາກກິນ
6:12 ພໍພວກຄົນນັ້ນໄດ້ກິນອີ່ມແລ້ວ ພຣະເຢຊູ ສັ່ງພວກລູກສິດວ່າ “ໃຫ້ເກັບສ່ວນ
ທີ່ເຫລືອເດີ້ ເພື່ອຊິບໍ່ມີແນວທີ່ເສຍຫາຍ”
6:13 ແລ້ວພວກລູກສິດຈັ່ງເອົາກະບຸງໄປເກັບເອົາ ໄດ້ສິບສອງກະບຸງເຕັມ ເປັນ
ທ່ອນໆ ຂອງເຂົ້າຈີ່ເຂົ້າບາເລຫ້າກ້ອນນັ້ນທີ່ເຫລືອ ຫລັງຈາກພວກຄົນຢູ່ຫັ້ນໄດ້
ກິນອີ່ມແລ້ວ
6:14 ແລ້ວບັດພວກຜູ້ຊາຍຢູ່ນັ້ນໄດ້ເຫັນເຄື່ອງໝາຍອັນສຳຄັນທີ່ ພຣະເຢຊູ ໄດ້ເຮັດ
ກໍໄດ້ເວົ້າກັນຂຶ້ນມາວ່າ “ແມ່ນຜູ້ນີ້ເນາະ ຄືຜູ້ເປັນປາກເປັນສຽງນັ້ນ ທີ່ໄດ້ເຂົ້າມາ
ໃນໂລກແລ້ວ”
6:15 ແລ້ວບັດພໍ ພຣະເຢຊູ ຮູ້ເນື່ອວ່າພວກເຂົາພວມກຽມທີ່ຊິບັງຄັບເພິ່ນ ແຕ່ງຕັ້ງ
ໃຫ້ເປັນກະສັດຂອງເຂົາ ເພິ່ນເລີຍເນືອຂຶ້ນໄປຢູ່ເທິງພູເຂົາແຕ່ຜູ້ດຽວ
6:16 ບັດຮອດຍາມຄໍ່າ ພວກລູກສິດຂອງ ພຣະເຢຊູ ກໍພາກັນລົງໄປທະເລສາບ

6:17 ພາກັນລົງເຮືອອອກໄປ ແລ້ວຂ້າມໄປທາງເມືອງ ກາເປນາອູມ ຄືມັນຄ່ຳມືດ
ແລ້ວແຕ່ ພຣະເຢຊູ ຍັງບໍ່ທັນລົງມາຫາພວກເຂົາ
6:18 ແລ້ວທະເລສາບນັ້ນກໍໄດ້ເກີດຄື້ນໃຫຍ່ຂຶ້ນມາ ຍ້ອນມີລົມພະຍຸໃຫຍ່ພັດມາ
ແຮງ
6:19 ພໍພວກລູກສິດໄດ້ພາຍເຮືອ ໄປໄດ້ປະມານຫ້າຫົກກິໂລແມັດແລ້ວ ພວກເຂົາ
ກໍໄດ້ເຫັນ ພຣະເຢຊູ ພວມຍ່າງມາຫາເທິງຜິວນ້ຳໃກ້ຊິມາເຖິງເຮືອແລ້ວ ບັດນີ້
ພວກລູກສິດກໍເລີຍຕົກໃຈຢ້ານ
6:20 ພຣະເຢຊູ ເລີຍປອບໃຈພວກເຂົາວ່າ ແມ່ນ ເຮົານີ້ເນາະ ຢ່າສູ່ຢ້ານເດີ້
6:21 ແລ້ວພວກເຂົາໄດ້ຮັບເອົາ ພຣະເຢຊູ ໄວ້ໃນເຮືອໂດຍຄວາມຍິນດີ ພໍ ພຣະເຢ-
ຊູ ຂຶ້ນເຮືອປັບ ເຮືອກໍໄດ້ຢູ່ຝັ່ງແລ້ວ ໝ້ອງທີ່ເຂົາວ່າຊິໄປນັ້ນ
6:22 ບັດມື້ອື່ນເຊົ້າມາ ພໍພວກປະຊາຊົນທີ່ຢືນຢູ່ຄົນລະຟາກຝັ່ງທະເລສາບສັງເກດ
ວ່າ ມີແຕ່ເຮືອລຳອື່ນໆ ຈອດຢູ່ ແຕ່ເຮືອລຳທີ່ລູກສິດຂອງເພິ່ນໃຊ້ບໍ່ໄດ້ຢູ່ ແລ້ວໄດ້
ສັງເກດອີກວ່າ ພຣະເຢຊູ ບໍ່ໄດ້ລົງເຮືອໄປພ້ອມກັບລູກສິດ ມີແຕ່ພວກລູກສິດໄປ
ກັນເອງ
6:23 (ແຕ່ວ່າມີເຮືອລຳອື່ນໆ ຈາກເມືອງ ຕິເບເຣຍ ໃກ້ໝ້ອງທີ່ ພຣະເຢຊູ ໄດ້ລ້ຽງ
ເຂົ້າຈີ່ໃຫ້ພວກປະຊາຊົນກິນນັ້ນ ຫລັງຈາກເພິ່ນໄດ້ຂອບໃຈພຣະເຈົ້າແລ້ວ)
6:24 ບັດພວກປະຊາຊົນເຫັນວ່າ ພຣະເຢຊູ ກັບລູກສິດບໍ່ໄດ້ຢູ່ຝັ່ງທາງເຂົານັ້ນ
ພວກເຂົາກໍພາກັນລົງເຮືອ ຂ້າມໄປເມືອງ ກາເປນາອູມ ຊອກຫາ ພຣະເຢຊູ ຢູ່ຫັ້ນ
6:25 ພໍພວກເຂົາມາພໍ້ ພຣະເຢຊູ ຢູ່ຟາກຝັ່ງພູ້ນແລ້ວ ເຂົາກໍຖາມເພິ່ນວ່າ ອາຈານ
ມາຮອດພີ້ຕັ້ງແຕ່ຍາມໃດ
6:26 ພຣະເຢຊູ ຕອບວ່າ ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າພວກເຈົ້າບໍ່ໄດ້ມາ
ຊອກຫາເຮົາຍ້ອນໄດ້ເຫັນເຄື່ອງໝາຍອັນສຳຄັນທີ່ເຮົາເຮັດນັ້ນດອກ ແຕ່ຍ້ອນໄດ້
ກິນເຂົ້າຈີ່ໃຫ້ອິ່ມທ້ອງຊື່ໆ
6:27 ຢ່າສູ່ຊອກຫາແນວຢູ່ແນວກິນທີ່ເສື່ອມເສຍໄປຊື່ໆ ແຕ່ໃຫ້ຊອກຫາອາຫານ-
ທິບ ແນວທີ່ຄົງຢູ່ຮອດຊີວິດອັນຕະຫລອດໄປເປັນນິດດີກວ່າ ທີ່ເຮົາບຸດມະນຸດນີ້ຊິ

ໄດ້ມອບໃຫ້ເຈົ້າ ຄືພຣະເຈົ້າຜູ້ເປັນພໍ່ໄດ້ປະທັບຕາຂອງເພິ່ນມອບສິດໄວ້ກັບເຮົາຢູ່
ແລ້ວ
6:28 ແລ້ວພວກເຂົາເລີຍຖາມ ພຣະເຢຊູ ວ່າ ຊິໃຫ້ເຮັດຈັ່ງໃດ ພວກຜູ້ຂ້າເຖິງຊິດຳ-
ເນີນຕາມວຽກງານຂອງພຣະເຈົ້າໄດ້
6:29 ພຣະເຢຊູ ຕອບເຂົາວ່າ ວຽກງານແນວທີ່ພຣະເຈົ້າຕ້ອງການໃຫ້ເຈົ້າດຳເນີນ
ຕາມນັ້ນກໍຄື ໃຫ້ພວກເຈົ້າເຊື່ອວາງໃຈໃນເຮົາຜູ້ທີ່ພຣະເຈົ້າໄດ້ໃຊ້ມານີ້
6:30 ແລ້ວພວກເຂົາກໍເລີຍຖາມ ພຣະເຢຊູ ວ່າ ນາຍຊິສະແດງເຄື່ອງໝາຍອັນສຳ-
ຄັນອີຫຍັງໃຫ້ເຫັນ ເພື່ອຊິເປັນແນວພິສູດ ໃຫ້ພວກຜູ້ຂ້າວາງໃຈເຊື່ອໃນນາຍໄດ້
ນາຍຊິເຮັດການງານຫຍັງແໜ່
6:31 ຄືປູ່ທວດຂອງພວກຜູ້ຂ້າໄດ້ກິນອາຫານທິບມານາໃນຖິ່ນແຫ້ງແລ້ງ ຄືກັນກັບ
ມີຄຳຂຽນໄວ້ວ່າ “ເພິ່ນໄດ້ເອົາອາຫານທິບຈາກສະຫວັນໃຫ້ພວກເຂົາກິນ”
6:32 ພຣະເຢຊູ ຕອບວ່າ ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າບໍ່ແມ່ນ ໂມເຊ
ດອກ ທີ່ໃຫ້ອາຫານທິບນັ້ນກັບພວກເຈົ້າ ແຕ່ວ່າແມ່ນພຣະເຈົ້າຜູ້ເປັນພໍ່ເຮົາຕ່າງ-
ຫາກ ເປັນຜູ້ໃຫ້ອາຫານທິບແທ້ມາຈາກສະຫວັນໃຫ້ພວກເຈົ້າກິນ
6:33 ຍ້ອນວ່າອາຫານທິບຂອງພຣະເຈົ້ານັ້ນ ແມ່ນໂຕເຮົາເອງ ຜູ້ທີ່ລົງມາຈາກສະ-
ຫວັນ ເພື່ອຊິນຳຊີວິດ ອັນຕະຫລອດໄປເປັນນິດມາໃຫ້ກັບຊາວໂລກ
6:34 ບັດນີ້ ພວກເຂົາເລີຍເວົ້າກັບ ພຣະເຢຊູ ວ່າ ນາຍເອີຍ ພວກຜູ້ຂ້າຂໍກິນອາ-
ຫານທິບນີ້ຢູ່ຕະຫລອດຄູ່ຍາມແໜ່ທ້ອນ
6:35 ແລ້ວ ພຣະເຢຊູ ເວົ້າກັບພວກເຂົາວ່າ ເຮົາເອງເປັນອາຫານທິບທີ່ໃຫ້ຊີວິດນັ້ນ
ເນາະ ຄົນທີ່ມາຫາເຮົາຊິບໍ່ເກີດຄວາມຫິວກະຫາຍອີກຈັກເທື່ອເລີຍ
6:36 ແຕ່ເຮົາບອກພວກເຈົ້າວ່າ ທັງໆ ທີ່ພວກເຈົ້າເຄີຍໄດ້ເຫັນເຮົາມາແລ້ວ ກໍຍັງ
ບໍ່ຍອມເຊື່ອເລີຍ
6:37 ແລ້ວຄູ່ຄົນທີ່ພຣະເຈົ້າຜູ້ເປັນພໍ່ໄດ້ມອບໃຫ້ເຮົາ ກໍຊິໄດ້ມາຫາເຮົາ ແລ້ວສ່ວນຜູ້
ທີ່ມາຫາເຮົານັ້ນ ເຮົາຊິບໍ່ປະບໍ່ຖິ້ມເຂົາຈັກເທື່ອເປັນອັນຂາດ
6:38 ຄື ທີ່ເຮົາໄດ້ລົງມາຈາກສະຫວັນນີ້ ບໍ່ແມ່ນເພື່ອເຮັດຕາມຈຸດປະສົງຂອງເຮົາ
ເອງ ແຕ່ວ່າໄດ້ມາຕາມຈຸດປະສົງຂອງພຣະເຈົ້າ ຜູ້ທີ່ໄດ້ໃຊ້ເຮົາມານັ້ນ

6:39 ແລ້ວຈຸດປະສົງຂອງພຣະເຈົ້າຜູ້ເປັນພໍ່ຜູ້ເພິ່ນໃຊ້ເຮົາມານັ້ນຄື ຄູ່ຄົນທີ່ເພິ່ນ
ມອບໄວ້ໃຫ້ຢູ່ກັບເຮົາ ຊິບໍ່ມີໃຜຈັກຄົນທີ່ຕົກເຮ່ຍເສຍຫາຍໄປເລີຍ ແລ້ວເຮົາຊິໃຫ້
ພວກເຂົາເປັນຂຶ້ນມາອີກໃນມື້ສຸດທ້າຍ
6:40 ແລ້ວຈຸດປະສົງຂອງພຣະເຈົ້າ ຜູ້ເພິ່ນທີ່ໃຊ້ເຮົາມານັ້ນເປັນແນວນີ້ ຄືຄູ່ຄົນທີ່
ໄດ້ຮູ້ໄດ້ເຫັນເຮົາ ແລ້ວໄດ້ເຊື່ອວາງໃຈໃນເຮົາຜູ້ເປັນ ພຣະບຸດ ກໍຊິໄດ້ມີຊີວິດ
ອັນຕະຫລອດໄປເປັນນິດທີ່ຍັ່ງຍືນຕະຫລອດເປັນນິດ ແລ້ວເຮົາຊິໃຫ້ຜູ້ນັ້ນ ເປັນ
ຂຶ້ນມາອີກໃນມື້ສຸດທ້າຍ
6:41 ບັດນີ້ ພວກຜູ້ນໍາຂອງຄົນ ຢິວ ໄດ້ຈົ່ມໃສ່ ພຣະເຢຊູ ຍ້ອນຄໍາທີ່ເພິ່ນໄດ້ເວົ້ານັ້ນ
ວ່າ “ເຮົາຄືອາຫານທິບນັ້ນ ທີ່ໄດ້ລົງມາຈາກສະຫວັນ”
6:42 ພວກເຂົາກໍຈົ່ມກັນວ່າ ບໍ່ແມ່ນຜູ້ນີ້ບໍ້ ລູກຊາຍຂອງ ໂຢເຊບ ນັ້ນ ເຮົາຮູ້ຈັກພໍ່ແມ່
ຂອງເຂົາດີຢູ່ ເປັນຫຍັງເຂົາຈັ່ງໄດ້ອ້າງໂຕວ່າ “ເຮົາໄດ້ລົງມາຈາກສະຫວັນ”
6:43 ພຣະເຢຊູ ກໍເລີຍຕອບພວກເຂົາວ່າ “ຢ່າສູ່ຈົ່ມກັນເດີ້
6:44 ບໍ່ມີໃຜຊິມາຫາເຮົາໄດ້ ນອກຈາກພຣະເຈົ້າຜູ້ເປັນພໍ່ທີ່ໃຊ້ເຮົາມານັ້ນ ໄດ້ຈູງໃຈ
ໃຫ້ມາ ແລ້ວເຮົາຊິໃຫ້ເຂົາຜູ້ນັ້ນເປັນຂຶ້ນມາອີກໃນມື້ສຸດທ້າຍ *(ໃຫ້ເບິ່ງ ໂຢຮັນ
12:32)*
6:45 ຄືໃນໜັງສືຂອງຜູ້ເປັນປາກເປັນສຽງຂອງພຣະເຈົ້າມີຄໍາຂຽນໄວ້ວ່າ ‘ພຣະເຈົ້າ
ຊິເປັນຜູ້ສອນພວກເຂົາໂດຍກົງ’ ຈັ່ງຊັ້ນ ຄູ່ຄົນທີ່ໄດ້ຍິນແລ້ວໄດ້ຮຽນຮູ້ມາຈາກ
ພຣະເຈົ້າຜູ້ເປັນພໍ່ ຜູ້ນັ້ນຊິມາຫາເຮົາ
6:46 ບໍ່ມີໃຜເຄີຍໄດ້ເຫັນພຣະເຈົ້າຜູ້ເປັນພໍ່ດອກ ມີແຕ່ເຮົາຜູ້ດຽວຜູ້ທີ່ມາຈາກພຣະ-
ເຈົ້ານັ້ນເນາະ ທີ່ໄດ້ເຫັນພຣະເຈົ້າຜູ້ເປັນພໍ່
6:47 ແລ້ວເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຜູ້ທີ່ເຊື່ອວາງໃຈໃນເຮົານີ້ ຜູ້ນັ້ນມີ
ຊີວິດອັນຕະຫລອດໄປເປັນນິດແລ້ວ
6:48 ແລ້ວເຮົາເປັນອາຫານທິບນັ້ນທີ່ໃຫ້ຊີວິດ
6:49 ຄືປູ່ທວດຂອງພວກເຈົ້າໄດ້ກິນອາຫານທິບມານາໃນຖິ່ນແຫ້ງແລ້ງ ແຕ່ພວກ-
ເຂົາກໍຍັງຕາຍໄປຄືກັນ

6:50 ແຕ່ວ່າອາຫານທິບແທ້ທີ່ໄດ້ລົງມາຈາກສະຫວັນນັ້ນ ເປັນແນວນີ້ ຄື ຄົນໃດທີ່
ຮັບກິນແລ້ວຊິບໍ່ຕາຍເລີຍ
6:51 ແລ້ວເຮົານີ້ເນາະ ເປັນອາຫານທິບແທ້ທີ່ໃຫ້ຊີວິດນັ້ນ ຊຶ່ງໄດ້ລົງມາຈາກສະ-
ຫວັນ ແລ້ວຄັ້ນຜູ້ໃດຮັບກິນອາຫານທິບນີ້ ຜູ້ນັ້ນກໍຊິມີຊີວິດອັນຕະຫລອດໄປເປັນ-
ນິດ ແລ້ວອາຫານທິບທີ່ເຮົາໃຫ້ນັ້ນ ຄືຕົນໂຕຂອງເຮົາເອງນີ້ເນາະ ຊຶ່ງເຮົາຊິສະ-
ລະເພື່ອຊີວິດຂອງຊາວໂລກທັງຫລາຍ”
6:52 ບັດນີ້ພວກຜູ້ນຳຂອງຄົນ ຢິວ ກໍເລີຍຖຽງກັນໄປມາວ່າ “ຄົນຜູ້ນີ້ຊິສະລະເລືອດ
ເນື້ອໜັງຂອງໂຕເອງມາເປັນອາຫານໃຫ້ພວກເຮົາກິນໄດ້ຈັ່ງໃດນໍ້”
6:53 ພຣະເຢຊູ ເລີຍເວົ້າກັບເຂົາອີກວ່າ “ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າ
ນອກຈາກພວກເຈົ້າຮັບເອົາເລືອດກັບເນື້ອໜັງຂອງເຮົາຜູ້ເປັນບຸດມະນຸດ ໃຫ້ເປັນ
ອາຫານກິນດື່ມຂອງຕົນ ພວກເຈົ້າຊິບໍ່ມີຊີວິດໃນໂຕເອງເລີຍ”
6:54 ຄືຜູ້ໃດທີ່ຮັບເອົາເລືອດກັບເນື້ອໜັງຂອງເຮົາໃຫ້ເປັນອາຫານກິນດື່ມຂອງຕົນ
ແລ້ວ ຜູ້ນັ້ນໄດ້ມີຊີວິດ ອັນຕະຫລອດໄປເປັນນິດແລ້ວ ແລ້ວເຮົາຊິໃຫ້ຜູ້ນັ້ນເປັນ
ຂຶ້ນມາອີກໃນມື້ສຸດທ້າຍ
6:55 ໂດຍວ່າ ເນື້ອໜັງກັບເລືອດຂອງເຮົາເປັນອາຫານທິບກິນດື່ມອັນແທ້ຈິງ
6:56 ແລ້ວຜູ້ທີ່ຮັບເອົາເລືອດກັບເນື້ອໜັງຂອງເຮົາ ໃຫ້ເປັນອາຫານກິນດື່ມຂອງໂຕ
ກໍໄດ້ເຂົ້າສະຖິດຢູ່ໃນເຮົາ ແລ້ວເຮົາໄດ້ເຂົ້າສະຖິດຢູ່ໃນຜູ້ນັ້ນນຳ
6:57 ຄື ຕາມທີ່ພຣະເຈົ້າຜູ້ເປັນພໍ່ທີ່ດຳລົງຢູ່ ໄດ້ໃຊ້ເຮົາມາ ແລ້ວເຮົາມີຊີວິດດຳລົງຢູ່
ຍ້ອນພຣະເຈົ້າຜູ້ເປັນພໍ່ນັ້ນ ແລ້ວສ່ວນຜູ້ທີ່ຮັບເອົາເຮົາເປັນອາຫານຂອງໂຕ ຜູ້ນັ້ນ
ກໍມີຊີວິດດຳລົງຢູ່ໄດ້ຍ້ອນເຮົາຄືກັນ
6:58 ນີ້ເນາະ ເປັນອາຫານທິບແທ້ທີ່ລົງມາຈາກສະຫວັນ ບໍ່ແມ່ນແນວທີ່ປູ່ທວດ
ຂອງພວກເຈົ້າໄດ້ກິນໃນຖິ່ນແຫ້ງແລ້ງຕອນສະໄໝກ່ອນນັ້ນ ແລ້ວກໍຍັງຕາຍໄປຄື
ກັນ ແຕ່ສ່ວນຜູ້ທີ່ຮັບກິນດື່ມອາຫານທິບນີ້ ຜູ້ນັ້ນຊິມີຊີວິດອັນຕະຫລອດໄປເປັນ-
ນິດ
6:59 ຄຳກ່າວແນວໝູ່ນີ້ ພຣະເຢຊູ ໄດ້ເວົ້າໃນສາລາທຳຂອງພວກຢິວ ຕອນເພິ່ນ
ບອກສອນຢູ່ເມືອງ ກາເປນາອູມ

6:60 ຈັ່ງຊັ້ນ ພໍລູກສິດຫລາຍຄົນຂອງ ພຣະເຢຊູ ໄດ້ຍິນເພິ່ນເວົ້າແບບນີ້ ເລີຍພາ-
ກັນຈົ່ມວ່າ “ຄຳສອນນີ້ ຟັງຍາກແທ້ ແມ່ນໃຜຊິເຂົ້າໃຈໄດ້ນໍ້”
6:61 ບັດພໍ ພຣະເຢຊູ ຮູ້ໃນໃຈວ່າພວກລູກສິດພາກັນຈົ່ມເຖິງເລື່ອງນີ້ ເພິ່ນເລີຍ
ຖາມພວກເຂົາວ່າ “ຄຳສອນນີ້ເຮັດໃຫ້ພວກເຈົ້າສະດຸດໃຈຊັ່ນບໍ້”
6:62 “ແລ້ວພວກເຈົ້າຊິວ່າຈັ່ງໃດເນາະ ຄັ່ນຊິເຫັນເຮົາ ຜູ້ເປັນບຸດມະນຸດ ຂຶ້ນໄປປະ-
ທັບຢູ່ໝ້ອງເດີມ
6:63 ຄື ແມ່ນ ພຣະວິນຍານ ເນາະທີ່ໃຫ້ຊີວິດ ສ່ວນຝ່າຍເນື້ອໜັງນັ້ນບໍ່ໄດ້ຊ່ອຍໃຫ້
ກຳໄລອິຫຍັງດອກ ແລ້ວຖ້ອຍຄຳທີ່ເຮົາເວົ້າກັບພວກເຈົ້ານີ້ ປະກອບດ້ວຍ ພຣະ-
ວິນຍານ ກັບດ້ວຍຊີວິດ
6:64 ແຕ່ຍັງມີຜູ້ລາງຄົນໃນພວກເຈົ້າທີ່ບໍ່ເຊື່ອ” ຄື ພຣະເຢຊູ ຮູ້ຈັກມາແຕ່ທຳອິດ
ແລ້ວວ່າ ໃຜທີ່ຊິບໍ່ເຊື່ອ ກັບໃຜທີ່ຊິທໍລະຍົດໃສ່ເພິ່ນ
6:65 ແລ້ວ ພຣະເຢຊູ ເວົ້າວ່າ “ຈັ່ງຊັ້ນເນາະ ເຮົາເຄີຍໄດ້ເວົ້າກັບພວກເຈົ້າວ່າ ບໍ່ມີ
ໃຜມາຫາເຮົາໄດ້ນອກຈາກພຣະເຈົ້າຜູ້ເປັນພໍ່ເຮົາໄດ້ໂຜດໃຫ້ມາ”
6:66 ຕັ້ງແຕ່ນັ້ນມາ ມີລູກສິດຫລາຍຄົນກໍໄດ້ທໍ້ຖອຍ ບໍ່ຕິດຕາມເພິ່ນອີກເລີຍ
6:67 ແລ້ວ ພຣະເຢຊູ ຈັ່ງໄດ້ເວົ້າກັບກຸ່ມສິບສອງຄົນນັ້ນວ່າ “ພວກເຈົ້າເດ້ ຄຶດຢາກ
ໜີຈາກເຮົາໄປຄືກັນຊັ່ນບໍ້”
6:68 ຊີໂມນເປໂຕ ເລີຍເວົ້າກັບ ພຣະເຢຊູ ວ່າ “ນາຍຜູ້ຂ້າເອີຍ ພວກຜູ້ຂ້າຊິໄປຫາ
ໃຜນໍ້ ມີແຕ່ນາຍເທົ່ານັ້ນທີ່ມີຖ້ອຍຄຳທີ່ໃຫ້ມີຊີວິດອັນຕະຫລອດໄປເປັນນິດ
6:69 ແລ້ວພວກຜູ້ຂ້າໄດ້ເກີດມີຄວາມເຊື່ອແນ່ໃຈກັນວ່າ ນາຍເປັນ ພຣະຄຣິດ
ພຣະຜູ້ໂຜດ ເປັນ ພຣະບຸດ ຂອງພຣະເຈົ້າ ຜູ້ເພິ່ນດຳລົງຢູ່”
6:70 ພຣະເຢຊູ ຕອບເຂົາວ່າ “ເຮົາໄດ້ເລືອກພວກເຈົ້າທັງສິບສອງຄົນບໍ່ແມ່ນບໍ້
ແລ້ວໃນພວກເຈົ້ານີ້ ກໍມີຜູ້ໜຶ່ງເປັນ ພະຍາມານ ຮ້າຍ”
6:71 ທີ່ ພຣະເຢຊູ ໄດ້ເວົ້ານີ້ ກໍໝາຍເຖິງ ຢູດາ ອິດສະກາຣິອົດ ລູກຊາຍຂອງ ຊີ-
ໂມນ ນັ້ນ ຍ້ອນວ່າແມ່ນ ຢູດາ ຜູ້ນີ້ເນາະ ທີ່ຊິທໍລະຍົດໃສ່ ພຣະເຢຊູ ເປັນຜູ້ໜຶ່ງໃນ
ກຸ່ມສິບສອງຄົນນັ້ນ

# ໂຢຮັນ ບົດທີ 7

7:1 ຫລັງຈາກແນວນັ້ນມາ ພຣະເຢຊູ ຍ່າງໄປທາງແຄວ້ນ ກາລີເລ ຍ້ອນເພິ່ນບໍ່-
ຢາກຍ່າງໃນແຄວ້ນ ຢູດາຍ ຍ້ອນວ່າພວກຜູ້ນຳຂອງຄົນ ຢິວ ຢູ່ນັ້ນ ພວມຄອຍຖ້າ
ຫາໂອກາດທີ່ຊິຂ້າເພິ່ນ
7:2 ພໍດີໃກ້ຊິຮອດງານເທດສະການສະຫລອງການເກັບກ່ຽວຜົນນາຂອງຄົນ ຢິວ
ແລ້ວ
7:3 ຈັ່ງຊັ້ນພວກນ້ອງຊາຍຂອງ ພຣະເຢຊູ ໄດ້ຊັກຊວນເພິ່ນວ່າ “ໃຫ້ອອກຈາກນີ້
ແລ້ວໄປແຄວ້ນ ຢູດາຍ ເພື່ອພວກລູກສິດຂອງອ້າຍຊິໄດ້ເຫັນການງານທີ່ອ້າຍ
ເຮັດ
7:4 ຍ້ອນວ່າບໍ່ມີໃຜເຮັດອີຫຍັງໃນທີ່ລັບໆ ບັດຢາກໃຫ້ຄົນອື່ນຮູ້ຈັກນຳ ຄັ່ນອ້າຍ
ເຮັດການແນວນີ້ກໍອອກມາສະແດງໂຕໃຫ້ຄົນທັງໂລກໄດ້ຮູ້ ໂລດ ເດີ້”
7:5 (ຄື ແມ່ນແຕ່ພວກນ້ອງຊາຍຂອງ ພຣະເຢຊູ ຍັງບໍ່ໄດ້ເຊື່ອໃນເພິ່ນເລີຍ)
7:6 ພຣະເຢຊູ ເລີຍເວົ້າກັບພວກນ້ອງວ່າ ມັນຍັງບໍ່ທັນຮອດຍາມຂອງອ້າຍດອກ
ແຕ່ຝ່າຍເວລາພວກນ້ອງໄປໄດ້ຕູ່ຍາມ
7:7 ໂລກນີ້ບໍ່ໄດ້ຊັງພວກນ້ອງດອກ ແຕ່ວ່າມັນຊັງອ້າຍ ຍ້ອນວ່າອ້າຍໄດ້ເປັນພະ-
ຍານ ເປີດເຜີຍການງານແນວຊົ່ວຂອງມັນ
7:8 ໃຫ້ພວກນ້ອງຂຶ້ນໄປງານສະຫລອງ ໂລດ ແຕ່ອ້າຍຍັງບໍ່ໄປງານສະຫລອງ
ດອກ ຍ້ອນວ່າຍາມເວລາຂອງອ້າຍຍັງບໍ່ທັນມາຮອດຄັກ
7:9 ພໍເວົ້າກັບພວກນ້ອງຈັ່ງຊີ້ແລ້ວ ພຣະເຢຊູ ກໍຍັງຢູ່ແຄວ້ນ ກາລີເລ ກ່ອນ
7:10 ແລ້ວບັດພວກນ້ອງຊາຍຂອງເພິ່ນໄດ້ຂຶ້ນໄປແລ້ວ ພຣະເຢຊູ ຈັ່ງຂຶ້ນໄປງານ
ນຳຫລັງ ແຕ່ວ່າແອບໄປຍ່າງລັບໆ ໂດຍບໍ່ໄດ້ເຜີຍໂຕ
7:11 ບັດນີ້ ພວກຜູ້ນຳຂອງຄົນ ຢິວ ຊອກຫາເພິ່ນຢູ່ໃນງານສະຫລອງນັ້ນ ຖາມກັນ
ວ່າ “ຜູ້ນັ້ນຢູ່ໃສ”
7:12 ແລ້ວໄດ້ເກີດມີການຈົ່ມກັນໃຫຍ່ເຖິງ ພຣະເຢຊູ ປະຊາຊົນຜູ້ລາງຄົນກໍວ່າ
ເພິ່ນເປັນຜູ້ດີ ອີກຜູ້ລາງຄົນກໍວ່າ ບໍ່ແມ່ນຜູ້ດີດອກ ຜູ້ນີ້ລັກລອບເຂົ້າມາຫລອກ-
ລວງປະຊາຊົນ

7:13 ແຕ່ວ່າບໍ່ມີໃຜກ້າປາກກ້າເວົ້າຢ່າງເປີດເຜີຍເຖິງເລື່ອງ ພຣະເຢຊູ ຍ້ອນວ່າ
ຕ່າງຄົນຕ່າງຢ້ານພວກຜູ້ນໍາຂອງຄົນ ຢິວ
7:14 ພໍຮອດກາງງານສະຫລອງນັ້ນແລ້ວ ພຣະເຢຊູ ກໍໄດ້ຂຶ້ນໄປເຂົ້າສອນຢູ່ໃນວິ-
ຫານ
7:15 ແລ້ວພວກຜູ້ນໍາຂອງຄົນ ຢິວ ທີ່ຟັງຢູ່ນັ້ນກໍພາກັນແປກໃຈເປັນຕາງຶດ ເວົ້າກັນ
ວ່າ “ຜູ້ຊາຍຜູ້ນີ້ມີຄວາມຮູ້ໃນໜັງສືມາຈາກໃສ ຂະໜາດບໍ່ເຄີຍຮຽນມາກ່ອນ”
7:16 ພຣະເຢຊູ ຕອບເຂົາວ່າ “ຫລັກຄໍາສອນຂອງເຮົາສອນຢູ່ນີ້ບໍ່ແມ່ນຂອງເຮົາ
ເອງດອກ ແຕ່ແມ່ນຂອງພຣະເຈົ້າຜູ້ເພິ່ນທີ່ໃຊ້ເຮົາມານັ້ນ”
7:17 ຄັນຜູ້ໃດຢາກຊິເຮັດຕາມຈຸດປະສົງຂອງພຣະເຈົ້າ ຜູ້ນັ້ນກໍຊິສາມາດເບິ່ງອອກ
ໄດ້ ໂລດ ວ່າ ຫລັກຄໍາສອນທີ່ເຮົາເວົ້ານີ້ມາຈາກພຣະເຈົ້າ ຫລືວ່າເຮົາເວົ້າເອົາເອງ
ຊື່ໆ
7:18 ສ່ວນຜູ້ທີ່ເວົ້າຕາມແນວຄວາມຄຶດຂອງໂຕເອງ ຊອກຫາກຽດໃຫ້ເຈົ້າຂອງ
ແຕ່ວ່າຜູ້ທີ່ຢາກຖວາຍກຽດແດ່ຜູ້ເພິ່ນທີ່ໃຊ້ເຂົາມານັ້ນ ຜູ້ນັ້ນເປັນຄົນທ່ຽງທໍາອິຫລີ
ບໍ່ມີຄວາມບໍ່ເປັນທໍາໃນໂຕເອງເລີຍ
7:19 ໂມເຊ ໄດ້ໃຫ້ກົດບັນຍັດຂອງພຣະເຈົ້າໄວ້ກັບພວກເຈົ້າບໍ່ແມ່ນບໍ້ ແຕ່ບໍ່ມີໃຜ
ໃນພວກເຈົ້າທີ່ຮັກສາກົດບັນຍັດນັ້ນໄວ້ເລີຍ ແລ້ວເປັນຫຍັງພວກເຈົ້າຈັ່ງຊອກຫາ
ໂອກາດຂ້າເຮົາ *(ໃຫ້ເບິ່ງ ໂຢຮັນ 5:45 ກັບ 9:28)*
7:20 ພວກຄົນຢູ່ຫັ້ນກໍເລີຍພາກັນເຍາະເຍີ້ຍວ່າ “ແມ່ນຜີເຂົ້າເຈົ້າແລ້ວບໍ້ ແມ່ນໃຜ
ຊອກຢາກຂ້າເຈົ້າດຽວນີ້”
7:21 ພຣະເຢຊູ ຕອບພວກເຂົາວ່າ “ເຮົາໄດ້ເຮັດເຄື່ອງໝາຍອັນສໍາຄັນແນວໜຶ່ງ
ແລ້ວພວກເຈົ້າຄູ່ຄົນກໍໄດ້ພາກັນແປກໃຈເປັນຕາງຶດ”
7:22 ສ່ວນ ໂມເຊ ນັ້ນໄດ້ໃຫ້ພິທີຕັດໄວ້ກັບພວກເຈົ້າ (ແຕ່ວ່າພວກບັນພະບຸລຸດເປັນ
ຜູ້ພາເຮັດ ບໍ່ແມ່ນ ໂມເຊ ) ແລ້ວພວກເຈົ້າກໍພາກັນເຮັດໃຫ້ຜູ້ຊາຍຄູ່ຄົນ ແມ່ນວ່າຊິ
ຖືກວັນຊະບາໂຕ

7:23 ແລ້ວຄັນຜູ້ຊາຍຜູ້ໃດຮັບພິທີຕັດໃນວັນຊະບາໂຕ ເພື່ອຮັກສາກົດບັນຍັດຂອງ
ໂມເຊ ນັ້ນໄວ້ບໍ່ໃຫ້ລະເມີດໄປ ເປັນຫຍັງພວກເຈົ້າຈັ່ງຂັດເຄືອງໃຈນຳເຮົາ ທີ່ວ່າ
ເຮົາໄດ້ປົວຄົນເຈັບໃຫ້ຫາຍເປັນດີໃນວັນຊະບາໂຕນັ້ນຄືກັນ
7:24 ຢ່າຕັດສິນຜູ້ອື່ນຕາມແນວທີ່ຕາເຫັນທາງພາຍນອກຊື່ໆ ແຕ່ວ່າໃຫ້ຕັດສິນ
ຕາມຄວາມເປັນທຳ ແນວມັນຖືກມັນແມ່ນເດີ້
7:25 ບັດນີ້ໄທເມືອງ ເຢຣູຊາເລັມ ຜູ້ລາງຄົນຖາມກັນວ່າ ແມ່ນຜູ້ນີ້ຊັ່ນບໍ້ ທີ່ພວກຜູ້-
ນຳຊອກຢາກຂ້າຖິ້ມນັ້ນ
7:26 ແຕ່ວ່າເບິ່ງ ຜູ້ນີ້ເວົ້າຢ່າງໃຈກ້າຫານ ໂລດ ແລ້ວພວກຫົວໜ້າກໍຍັງບໍ່ໄດ້ເວົ້າ
ອີຫຍັງກັບ ລາວ ເລີຍ ພວກຫົວໜ້າຮູ້ຈັກອີຫລີບໍ້ ວ່າຜູ້ນີ້ເປັນ ພຣະຄຣິດ ພຣະຜູ້-
ໂຜດນັ້ນ
7:27 ສ່ວນພວກເຮົາ ຮູ້ຈັກແລ້ວວ່າຜູ້ນີ້ມາແຕ່ໃສ ແຕ່ວ່າບັດ ພຣະຄຣິດ ພຣະຜູ້ໂຜດ
ນັ້ນມາແລ້ວ ບໍ່ມີໃຜຊິຮູ້ຈັກວ່າເພິ່ນມາແຕ່ໃສ
7:28 ບັດນີ້ ຕອນ ພຣະເຢຊູ ພວມສອນຢູ່ໃນວິຫານນັ້ນ ກໍເລີຍເວົ້າຂຶ້ນຢ່າງແຮງວ່າ
ໂອ໋ ພວກເຈົ້າຮູ້ຈັກເຮົາດີຢູ່ແລ້ວ ວ່າເຮົາມາແຕ່ໃສ ແລ້ວຮູ້ຈັກວ່າ ເຮົາບໍ່ໄດ້ມາ
ຕາມລຳພັງຂອງເຮົາເອງດອກ ແລ້ວຜູ້ເພິ່ນທີ່ໃຊ້ເຮົາມານັ້ນ ເປັນຜູ້ສັດຊື່ທ່ຽງທຳ
ແຕ່ສ່ວນພວກເຈົ້າບໍ່ຮູ້ຈັກເພິ່ນດອກ
7:29 ແຕ່ສ່ວນເຮົາເອງໄດ້ຮູ້ຈັກເພິ່ນ ຍ້ອນວ່າເຮົາມາຈາກເພິ່ນ ໂດຍວ່າເພິ່ນເປັນຜູ້
ໃຊ້ເຮົາມາ
7:30 ບັດນີ້ ພວກຄົນ ຢິວ ຫາໂອກາດຈັບເອົາ ພຣະເຢຊູ ແຕ່ບໍ່ມີໃຜແຕະຕ້ອງເພິ່ນ
ໄດ້ ຍ້ອນວ່າມັນຍັງບໍ່ທັນເຖິງຍາມເຖິງເວລາຂອງເພິ່ນ ທີ່ກຳນົດໄວ້ນັ້ນ
7:31 ແລ້ວມີປະຊາຊົນຫລາຍຄົນທີ່ພາກັນເຊື່ອໃນໂຕເພິ່ນ ແຕ່ຍັງເວົ້າກັນວ່າ “ບັດ
ພຣະຄຣິດ ພຣະຜູ້ໂຜດນັ້ນລົງມາ ເພິ່ນກໍຊິເຮັດເຄື່ອງໝາຍອັນສຳຄັນຫລາຍກວ່າ
ຜູ້ນີ້ຢູ່ຊັ່ນບໍ້”
7:32 ບັດນີ້ ພໍພວກຄະນະ ຟາຣີຊາຍ ໄດ້ຍິນປະຊາຊົນຊຸມກັນເຖິງ ພຣະເຢຊູ ຈັ່ງຊີ້
ພວກຄະນະ ຟາຣີຊາຍ ກັບພວກຫົວໜ້າປະໂລຫິດ ໄດ້ໃຊ້ພວກຍາມຮັກສາການ
ປະຈຳວິຫານ ໃຫ້ໄປຫາຈັບເອົາເພິ່ນ

7:33 ບັດນີ້ ພຣະເຢຊູ ບອກພວກຄົນຢູ່ທັ້ນວ່າ ເຮົາຊິຢູ່ກັບພວກເຈົ້າອີກໜ່ອຍໜຶ່ງ
ແລ້ວຈັ່ງຊິກັບໄປຢູ່ນຳພຣະເຈົ້າຜູ້ເພິ່ນທີ່ໃຊ້ເຮົາມາ
7:34 ພວກເຈົ້າຊິຊອກຫາເຮົາແຕ່ວ່າຊິບໍ່ພໍ້ ແລ້ວໜ້ອງທີ່ເຮົາຊິໄປຢູ່ນັ້ນ ພວກເຈົ້າ
ໄປບໍ່ໄດ້ເປັນອັນຂາດ
7:35 ບັດນີ້ ພວກຜູ້ນຳຂອງຄົນ ຢິວ ເວົ້າກັນວ່າ ຜູ້ນີ້ຄຶດວ່າຊິໄປຢູ່ໃສນໍ້ ທີ່ພວກເຮົາ
ຈັ່ງຊິນຳຫາບໍ່ພໍ້ ຊິໄປຫາພວກຄົນ ຢິວ ທີ່ແຍກຍ້າຍໄປຢູ່ຕ່າງປະເທດຊັ້ນບໍ້ ສອນ
ຄົນຕ່າງຊາດຢູ່ນັ້ນຕີ້
7:36 ໝາຍຄວາມວ່າຈັ່ງໃດນໍ້ແນວນັ້ນທີ່ຜູ້ນີ້ວ່າ “ພວກເຈົ້າຊິຊອກຫາເຮົາແຕ່ວ່າຊິບໍ່
ພໍ້ ແລ້ວໜ້ອງທີ່ເຮົາຊິໄປຢູ່ນັ້ນ ພວກເຈົ້າໄປບໍ່ໄດ້ເປັນອັນຂາດ”
7:37 ບັດຮອດມື້ສຸດທ້າຍ ທີ່ເປັນມື້ຍິ່ງໃຫຍ່ຂອງງານລ້ຽງສະຫລອງນັ້ນ ພຣະເຢຊູ
ໄດ້ຢືນຮ້ອງປະກາດວ່າ ຄັ່ນຜູ້ໃດຫິວນໍ້າໃຫ້ມາຫາເຮົາ ຈັ່ງໄດ້ກິນນໍ້າທິບ
7:38 ຕາມທີ່ມີ ພຣະຄຳ ກ່າວໄວ້ແລ້ວວ່າ ຜູ້ທີ່ເຊື່ອວາງໃຈໃນເຮົາ ຜູ້ນັ້ນກໍຊິມີສາຍ-
ນໍ້າທິບທີ່ໃຫ້ຊີວິດ ໄຫລອອກມາຈາກຈິດໃຈຂອງເຂົາຜູ້ນັ້ນ
7:39 ແຕ່ແນວທີ່ ພຣະເຢຊູ ໄດ້ເວົ້າມານີ້ ໄດ້ເວົ້າເຖິງ ພຣະວິນຍານ ຊຶ່ງຜູ້ທີ່ເຊື່ອ
ວາງໃຈໃນ ພຣະເຢຊູ ຊິໄດ້ຮັບ ແຕ່ວ່າຕອນນີ້ ພຣະວິນຍານ ຍັງບໍ່ທັນໄດ້ລົງມາ
ຍ້ອນວ່າ ພຣະເຢຊູ ຍັງບໍ່ທັນໄດ້ກັບໄປສູ່ພຣະກຽດອັນຮຸ່ງເຮືອງຂອງເພິ່ນ
7:40 ບັດພວກປະຊາຊົນໄດ້ຍິນ ພຣະເຢຊູ ເວົ້າຈັ່ງຊັ້ນ ຫລາຍຄົນໄດ້ເວົ້າກັນວ່າ “ຜູ້
ນີ້ແມ່ນຜູ້ເປັນປາກເປັນສຽງຜູ້ນັ້ນອີຫລີ”
7:41 ອີກຜູ້ລາງຄົນກໍວ່າ “ຜູ້ນີ້ແມ່ນ ພຣະຄຣິດ ພຣະຜູ້ໂຜດນັ້ນອີຫລີ” ແຕ່ສ່ວນອີກ
ຜູ້ລາງຄົນຄັດຄ້ານວ່າ “ ພຣະຄຣິດ ພຣະຜູ້ໂຜດນັ້ນຊິອອກມາຈາກແຄວັນ ກາລີ-
ເລ ໄດ້ບໍ້”
7:42 ຄືມີ ພຣະຄຳ ກ່າວເຖິງ ພຣະຄຣິດ ພຣະຜູ້ໂຜດນັ້ນແລ້ວບໍ່ແມ່ນບໍ້ ທີ່ວ່າເພິ່ນຊິ
ໄດ້ເກີດມາຕາມເຊື້ອສາຍຂອງກະສັດ ດາວິດ ແລ້ວກໍຊິໄດ້ມາຈາກເມືອງ ເບັດເລ-
ເຮັມ ຖິ່ນເກີດຂອງກະສັດ ດາວິດ ນັ້ນ
7:43 ເລີຍມີການຂັດແຍ້ງກັນລະຫວ່າງປະຊາຊົນຍ້ອນ ພຣະເຢຊູ

7:44 ບັດນີ້ ຜູ້ລາງຄົນກໍຢາກຈັບເອົາ ພຣະເຢຊູ ໂລດ ແຕ່ວ່າບໍ່ມີໃຜກ້າລົງມືຈັບ
ເພິ່ນເລີຍ
7:45 ແລ້ວພວກຍາມຮັກສາການປະຈຳວິຫານນັ້ນ ທີ່ຖືກໃຊ້ໄປຈັບ ພຣະເຢຊູ ຕອນ
ກັບໄປຫາພວກຫົວໜ້າປະໂລຫິດກັບພວກຄະນະ ຟາຣີຊາຍ ໄດ້ຖືກພວກເຂົາ
ຖາມວ່າ “ເປັນຫຍັງຄືບໍ່ຈັບເອົາໂຕຜູ້ນັ້ນມາ”
7:46 ພວກຍາມນັ້ນ ເລີຍຕອບວ່າ “ບໍ່ເຄີຍມີໃຜໄດ້ເວົ້າຄັກຄືຜູ້ນີ້ຈັກເທື່ອເລີຍ”
7:47 ບັດນີ້ພວກຄະນະ ຟາຣີຊາຍ ຕອບພວກຍາມວ່າ ບໍ່ແມ່ນພວກເຈົ້າຖືກຜູ້ນັ້ນ
ເປົ່າຫູ ຫລອກລວງຄືກັນກັບພວກປະຊາຊົນຊັ້ນບໍ້
7:48 ມີໃຜແໜ່ ໃນພວກຜູ້ນຳ ຫລືວ່າໃນພວກ ຟາຣີຊາຍ ເຮົານີ້ ທີ່ໄດ້ຫລົງເຊື່ອນຳ
ຜູ້ນັ້ນບໍ້
7:49 ແຕ່ຝ່າຍພວກປະຊາຊົນນັ້ນ ກໍຢູ່ພາຍໃຕ້ການແຊ່ງສາບຢູ່ແລ້ວ ຍ້ອນວ່າເຂົາ
ບໍ່ຮູ້ຈັກອີຫຍັງທາງກົດບັນຍັດ
7:50 ບັດນີ້ ນີໂກເດມ (ຜູ້ໜຶ່ງໃນພວກເຂົາ ທີ່ໄດ້ໄປຫາ ພຣະເຢຊູ ຕອນຍາມກາງ-
ຄືນນັ້ນ) ລາວກໍເລີຍຖາມພວກໝູ່ ຟາຣີຊາຍ ນັ້ນວ່າ
7:51 “ກົດບັນຍັດຂອງພວກເຮົາສອນໃຫ້ຕັດສິນຄວາມໃສ່ຜູ້ໃດຜູ້ໜຶ່ງກ່ອນທີ່ຊິຮັບ
ຟັງ ຮູ້ໃນເລື່ອງຂໍ້ອ້າງຂອງເຂົາກ່ອນໄດ້ບໍ້”
7:52 ພວກເຂົາເລີຍຕອບ ລາວ ວ່າ “ໂອ໋ ໂຕເປັນຊາວ ກາລີເລ ມານຳກັນຊະບໍ້ ໃຫ້
ຄົ້ນຫາໃນໜັງສືເບິ່ງເອົາ ໂລດ ມັນບໍ່ເຄີຍມີຜູ້ເປັນປາກເປັນສຽງຂອງພຣະເຈົ້າມາ
ຈາກແຄວ້ນ ກາລີເລ ຈັກເທື່ອດອກ”
7:53 ຕໍ່ຈາກຫັ້ນມາ ຕ່າງຄົນກໍຕ່າງພາກັນເມືອເຮືອນຂອງໃຜຂອງມັນ

## ໂຢຮັນ ບົດທີ 8

8:1 ແຕ່ສ່ວນ ພຣະເຢຊູ ເພິ່ນໄດ້ຂຶ້ນໄປຢູ່ເທິງພູເຂົາໝາກກອກເທດ
8:2 ພໍຮອດຕອນເຊົ້າ ເພິ່ນໄດ້ກັບມາເຂົ້າວິຫານນັ້ນອີກ ແລ້ວພວກປະຊາຊົນກໍພາ-
ກັນມາຫາເພິ່ນ ເພິ່ນເລີຍນັ່ງລົງແລ້ວສອນພວກເຂົາ
8:3 ບັດນີ້ ພວກນັກທຳ ກັບພວກຄະນະ ຟາຣີຊາຍ ໄດ້ຈັບແມ່ຍິງຜູ້ໜຶ່ງພວມຫລິ້ນ-
ຊູ້ຢູ່ ແລ້ວໄດ້ນຳເອົານາງນັ້ນມາຢູ່ຕໍ່ໜ້າພວກປະຊາຊົນ

8:4 ແລ້ວພວກເຂົາບອກ ພຣະເຢຊູ ວ່າ “ອາຈານ ແມ່ຍິງຄົນນີ້ຖືກພວກເຮົາຈັບ
ຕອນພວມຫລິ້ນຊູ້ຢູ່
8:5 ບັດນີ້ ໂມເຊ ໄດ້ສັ່ງໄວ້ໃນກົດບັນຍັດວ່າ ໃຫ້ຂວ້າງກ້ອນຫີນໃສ່ປະຫານຊີວິດ
ຄົນແນວນີ້ ອາຈານວ່າຈັ່ງໃດ”
8:6 ຄື ພວກເຂົາລອງລໍ້ຖາມ ພຣະເຢຊູ ແນວນີ້ ເພື່ອຊິມີແນວຈັບຜິດຫາເລື່ອງໃສ່
ເພິ່ນ ສ່ວນ ພຣະເຢຊູ ນັ່ງກົ້ມໜ້າລົງ ເອົານິ້ວມືຂຽນໃສ່ຂີ້ດິນ ທຳທ່າບໍ່ໄດ້ຍິນເຂົາ
ເວົ້າ
8:7 ແລ້ວບັດພວກເຂົາສໍ່ຖາມເພິ່ນຫລາຍເຂົ້າ ພຣະເຢຊູ ເລີຍຢືນຂຶ້ນເວົ້າວ່າ “ໃນ
ພວກເຈົ້າຜູ້ໃດບໍ່ມີບາບກໍໃຫ້ເອົາກ້ອນຫີນແກວ່ງໃສ່ນາງນີ້ກ່ອນໝູ່ ໂລດ ”
8:8 ເວົ້າແລ້ວ ພຣະເຢຊູ ນັ່ງກົ້ມລົງ ຂຽນໃສ່ຂີ້ດິນຕໍ່ອີກ
8:9 ບັດພໍໄດ້ຍິນເພິ່ນເວົ້າ ກໍແທງໃຈດຳຂອງພວກເຂົາ ເຂົາເລີຍຄ່ອຍຫລົບໜີອອກ
ໄປ ເທື່ອລະຄົນໆ ຜູ້ມີອາຍຸໄປກ່ອນ ລົງມາຈົນຮອດໝົດຄູ່ຄົນ ເຫລືອແຕ່ ພຣະເຢ-
ຊູ ກັບແມ່ຍິງທີ່ຢືນຢູ່ຕໍ່ໜ້າປະຊາຊົນນັ້ນ
8:10 ບັດພໍ ພຣະເຢຊູ ໄດ້ຢືນຂຶ້ນ ເຫັນວ່າຄົນພວກນັ້ນໄດ້ໜີໄປໝົດແລ້ວ ເລີຍເວົ້າ
ກັບແມ່ຍິງນັ້ນວ່າ ນາງເອີຍ ພວກຜູ້ກ່າວຫາໃສ່ເຈົ້ານັ້ນໄປໃສໝົດ ບໍ່ມີໃຜຊິໃຫ້
ໂທດເຈົ້າບໍ້
8:11 ແມ່ຍິງນັ້ນເວົ້າວ່າ ບໍ່ມີແລ້ວ ນາຍເຈົ້າຂ້າເອີຍ ພຣະເຢຊູ ບອກນາງວ່າ ຄັ່ນ
ຈັ່ງຊັ້ນ ເຮົາກໍບໍ່ມີໂທດໃຫ້ເຈົ້າຄືກັນ ໄປຊະ ແລ້ວຢ່າຊູ່ມາເຮັດຜິດບາບຕໍ່ໄປອີກເດີ້
8:12 ແລ້ວ ພຣະເຢຊູ ກໍໄດ້ສອນພວກປະຊາຊົນຕໍ່ອີກ ເວົ້າວ່າ “ເຮົາເປັນແສງສະ-
ຫວ່າງໃຫ້ຊາວໂລກ ຜູ້ທີ່ໄປນຳເຮົາຊິບໍ່ໄດ້ຫລົງຢູ່ໃນຄວາມມືດ ແຕ່ຊິມີແສງສະ-
ຫວ່າງໃນຊີວິດ” *(ໃຫ້ເບິ່ງ ໂຢຮັນ 1:9)*
8:13 ບັດນີ້ພວກຄະນະ ຟາຣີຊາຍ ເວົ້າຂຶ້ນວ່າ ບັດເຈົ້າມາເວົ້າເປັນພະຍານເຖິງໂຕ-
ເຈົ້າເອງ ຈັ່ງຊັ່ນຄຳພະຍານຂອງເຈົ້າໃຊ້ບໍ່ໄດ້
8:14 ພຣະເຢຊູ ເລີຍບອກເຂົາວ່າ ແມ່ນວ່າເຮົາຊິເວົ້າເປັນພະຍານເຖິງໂຕເຮົາເອງ
ຄຳພະຍານຂອງເຮົາກໍເປັນຄວາມສັດຈິງ ຍ້ອນເຮົາຮູ້ຈັກວ່າເຮົາມາຈາກໃສແລ້ວ
ຊິໄປໃສ

8:15 ສ່ວນພວກເຈົ້ານີ້ ມັກຊິຕັດສິນຕາມຝ່າຍເນື້ອໜັງ ແຕ່ສ່ວນເຮົາກໍບໍ່ໄດ້ຕັດສິນ
ຜູ້ໃດ
8:16 ແລ້ວຄັ້ນແມ່ນວ່າເຮົາຊິໃຫ້ການຕັດສິນ ການຕັດສິນຂອງເຮົານັ້ນກໍຖືກຕ້ອງ
ຍ້ອນວ່າເຮົາບໍ່ໄດ້ຢູ່ຜູ້ດຽວ ແຕ່ເຮົາຢູ່ນຳພຣະເຈົ້າຜູ້ເປັນພໍ່ ຜູ້ທີ່ສະຖິດຢູ່ນຳເຮົາ ຄື
ເພິ່ນຜູ້ທີ່ໄດ້ໃຊ້ເຮົາມານັ້ນ
8:17 ແລ້ວໃນກົດບັນຍັດມີຂຽນໄວ້ອີກວ່າ ຄັ້ນມີສອງຄົນໃຫ້ການ ຄຳພະຍານຂອງ
ເຂົາສອງຄົນນັ້ນກໍໃຫ້ຖືວ່າເປັນຄວາມຈິງແລ້ວ
8:18 ທີ່ວ່າເຮົາເປັນພະຍານອ້າງເຖິງໂຕເຈົ້າຂອງກໍແມ່ນ ແລ້ວພຣະເຈົ້າຜູ້ເປັນພໍ່ຜູ້
ທີ່ໃຊ້ເຮົາມານັ້ນ ເພິ່ນກໍເປັນພະຍານໃຫ້ການກັບເຮົານຳ
8:19 ບັດນີ້ພວກເຂົາໄດ້ຖາມ ພຣະເຢຊູ ວ່າ “ຢູ່ໃສເນາະ ພໍ່ເຈົ້ານັ້ນ” ພຣະເຢຊູ
ຕອບວ່າ “ພວກເຈົ້າບໍ່ຮູ້ຈັກເຮົາດອກ ກັບບໍ່ຮູ້ຈັກພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຄັ້ນ
ແມ່ນພວກເຈົ້າໄດ້ຮູ້ຈັກເຮົາອີຫລີ ເຈົ້າຕ້ອງຮູ້ຈັກພຣະເຈົ້າຜູ້ເປັນພໍ່ເຮົາຄືກັນ”
8:20 ພຣະເຢຊູ ໄດ້ເວົ້າຖ້ອຍຄຳແນວໝູ່ນີ້ຕອບພວກເຂົາ ຢູ່ແຖວຄັງເງິນຕອນທີ່
ເພິ່ນພວມສອນໃນວິຫານນັ້ນ ແຕ່ບໍ່ມີໃຜຈັບກຸມເພິ່ນເລີຍ ຍ້ອນວ່າຍັງບໍ່ທັນເຖິງ
ເວລາຂອງເພິ່ນທີ່ກຳນົດໄວ້ນັ້ນ
8:21 ບັດນີ້ ພຣະເຢຊູ ເວົ້າກັບພວກເຂົາຊ້ຳອີກວ່າ ເຮົາຊິອອກຈາກນີ້ໄປ ແລ້ວ
ພວກເຈົ້າຊິຊອກຫາເຮົາຢູ່ ແຕ່ຊິຕາຍໄປໃນການບາບຂອງໂຕເອງ ສ່ວນໜ້ອງທີ່
ເຮົາຊິໄປນັ້ນ ພວກເຈົ້າໄປບໍ່ໄດ້ເປັນອັນຂາດ *(ໃຫ້ເບິ່ງ ໂຢຮັນ 7:34)*
8:22 ບັດນີ້ພວກຜູ້ນຳຂອງຄົນ ຢິວ ເລີຍເວົ້າກັນວ່າ “ໂອ໋ ເຂົາຊິໄປຂ້າໂຕເອງຕາຍ
ຊັ້ນບໍ້ ຄືເຫັນເຂົາເວົ້າວ່າ ‘ໜ້ອງທີ່ເຂົາຊິໄປນັ້ນ ພວກເຈົ້າໄປບໍ່ໄດ້ເປັນອັນຂາດ’”
8:23 ພຣະເຢຊູ ເລີຍເວົ້າກັບພວກເຂົາຕໍ່ອີກວ່າ “ຝ່າຍພວກເຈົ້າມາຈາກຂ້າງລຸມນີ້
ແຕ່ເຮົາມາຈາກເບື້ອງເທິງ ແລ້ວພວກເຈົ້າຢູ່ຝ່າຍໂລກນີ້ ແຕ່ເຮົາບໍ່ໄດ້ຢູ່ຝ່າຍໂລກ
ນີ້
8:24 ຈັ່ງຊັ້ນ ເຮົາໄດ້ບອກພວກເຈົ້າວ່າ ພວກເຈົ້າຊິຕາຍໄປໃນການບາບຂອງໂຕ
ເອງ ຄັ້ນບໍ່ຮັບເຊື່ອໃນເຮົາ ວ່າເປັນຜູ້ທີ່ພຣະເຈົ້າໃຊ້ມານັ້ນ ພວກເຈົ້າຊິຕາຍໄປໃນ
ການບາບຂອງໂຕເອງ”

8:25 ແລ້ວພວກເຂົາຖາມ ພຣະເຢຊູ ວ່າ “ເຈົ້າເດ ແມ່ນຜູ້ໃດຊັ້ນ” ພຣະເຢຊູ ເລີຍ
ຕອບວ່າ “ກໍແມ່ນຜູ້ນັ້ນແລ້ວ ຕາມທີ່ເຮົາໄດ້ເວົ້າມາແຕ່ທຳອິດນັ້ນເນາະ”
8:26 “ເຮົາມີຫລາຍແນວທີ່ຊິເວົ້າຢູ່ ແລ້ວມີການຕັດສິນເຖິງພວກເຈົ້ານຳ ຈັ່ງໃດກໍ
ຕາມ ສ່ວນຜູ້ເພິ່ນທີ່ໃຊ້ເຮົາມານີ້ ເພິ່ນເປັນຜູ້ທ່ຽງທຳສັດຈິງ ແລ້ວແນວທີ່ເຮົາກ່າວ
ໃຫ້ຊາວໂລກນີ້ ເປັນແນວທີ່ເຮົາໄດ້ຍິນຈາກເພິ່ນ”
8:27 ບັດນີ້ພວກເຂົາບໍ່ເຂົ້າໃຈວ່າ ພຣະເຢຊູ ພວມເວົ້າເຖິງພຣະເຈົ້າຜູ້ເປັນພໍ່
8:28 ພຣະເຢຊູ ເລີຍເວົ້າອີກວ່າ ບັດພໍພວກເຈົ້າຍົກເຮົາຜູ້ເປັນບຸດມະນຸດຂຶ້ນໄວ້ນັ້ນ
ບັດນັ້ນເນາະ ພວກເຈົ້າຊິຮູ້ເມື່ອວ່າ ເຮົານີ້ແມ່ນຜູ້ນັ້ນອີຫລີທີ່ພຣະເຈົ້າໄດ້ໃຊ້ມາ
ແລ້ວພວກເຈົ້າຊິຮູ້ກັນວ່າ ເຮົາບໍ່ໄດ້ເຮັດອີຫຍັງຕາມໃຈມັກ ແຕ່ເຮົາໄດ້ເວົ້າຕາມ
ແນວທີ່ພຣະເຈົ້າຜູ້ເປັນພໍ່ໄດ້ບອກໄດ້ສອນເຮົາມານັ້ນ
8:29 ແລ້ວພຣະເຈົ້າຜູ້ເພິ່ນທີ່ໄດ້ໃຊ້ເຮົາມານັ້ນ ເພິ່ນສະຖິດຢູ່ນຳເຮົາ ຄືພຣະເຈົ້າຜູ້
ເປັນພໍ່ບໍ່ໄດ້ປະໄດ້ຖິ້ມເຮົາໃຫ້ຢູ່ຜູ້ດຽວ ຄືເຮົາເຮັດຕາມແນວທີ່ເພິ່ນພໍໃຈຢູ່ຕະ-
ຫລອດ
8:30 ຕອນທີ່ ພຣະເຢຊູ ພວມເວົ້າຖ້ອຍຄຳຢູ່ນີ້ ໄດ້ມີຫລາຍຄົນທີ່ໄດ້ຮັບເຊື່ອວາງໃຈ
ໃນເພິ່ນ
8:31 ບັດນີ້ ພຣະເຢຊູ ໄດ້ເວົ້າກັບພວກຢິວທີ່ຮັບເຊື່ອໃນເພິ່ນນັ້ນວ່າ ຄັນພວກເຈົ້າ
ດຳລົງຢູ່ໃນຖ້ອຍຄຳຂອງເຮົານີ້ ພວກເຈົ້າໄດ້ເປັນລູກສິດຂອງເຮົາອີຫລີ
8:32 ແລ້ວພວກເຈົ້າຊິຮູ້ຈັກຄວາມເປັນຈິງ ແລ້ວຄວາມຈິງນີ້ ຊິປົດປ່ອຍພວກເຈົ້າ
ໃຫ້ມີເສລີພາບເປັນໄທແທ້
8:33 ພວກເຂົາຄັດຄ້ານວ່າ “ພວກເຮົານີ້ໄດ້ເປັນລູກຫລານຂອງ ອັບຣາຮາມ ພໍ່ຕະ-
ກູນຂອງເຮົາຢູ່ດິໆ ແລ້ວບໍ່ເຄີຍເປັນຄົນໃຊ້ຂອງໃຜຈັກເທື່ອ ແລ້ວເປັນຫຍັງຈັ່ງ
ເວົ້າວ່າຊິປົດປ່ອຍພວກເຮົາໃຫ້ມີເສລີພາບເປັນໄທແທ້”
8:34 ພຣະເຢຊູ ຕອບເຂົາວ່າ ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຄູ່ຄົນທີ່ເຮັດ
ຄວາມຜິດບາບ ກໍຕົກເປັນຂ້າທາດຂອງບາບນັ້ນ
8:35 ຕາມຫລັກແລ້ວ ຂ້າທາດກໍບໍ່ໄດ້ພັກອາໄສຢູ່ໃນວັງຂອງນາຍຕະຫລອດ ມີແຕ່
ລູກນາຍນັ້ນເນາະທີ່ມີສິດ ໃຫ້ຢູ່ໃນວັງຂອງນາຍຕະຫລອດ

8:36 ຈັ່ງຊັ້ນ ຄັນ ພຣະບຸດ ປົດປ່ອຍພວກເຈົ້າ ຜູ້ເປັນຂ້າທາດ ໃຫ້ມີເສລີພາບ ພວກ
ເຈົ້າຊິມີເສລີພາບອີຫລີ
8:37 ເຮົາຮູ້ຈັກວ່າພວກເຈົ້າເປັນລູກຫລານຕາມເຊື້ອສາຍຂອງ ອັບຣາຮາມ ຢູ່ດີ
ແຕ່ພວກເຈົ້າພະຍາຍາມທີ່ຊິຂ້າເຮົາຍ້ອນວ່າ ຄຳຂອງເຮົາບໍ່ມີທີ່ສະຖິດຢູ່ໃນພວກ
ເຈົ້າເລີຍ
8:38 ສ່ວນເຮົານີ້ ໄດ້ເວົ້າຕາມແຕ່ແນວທີ່ເຮົາໄດ້ເຫັນຈາກພຣະເຈົ້າຜູ້ເປັນພໍ່ຂອງ
ເຮົາ ແລ້ວພວກເຈົ້າພາກັນເອົາແບບຕາມແນວທີ່ເຫັນພໍ່ຂອງພວກເຈົ້າເຮັດ
8:39 ພວກເຂົາຕອບ ພຣະເຢຊູ ວ່າ “ພໍ່ຂອງພວກເຮົານີ້ກໍຄື ອັບຣາຮາມ ນັ້ນເນາະ”
ແຕ່ ພຣະເຢຊູ ເວົ້າວ່າ “ຄັນພວກເຈົ້າເປັນລູກຫລານຂອງ ອັບຣາຮາມ ອີຫລີ ພວກ
ເຈົ້າຄືຊິເຮັດຕາມການງານ ແນວທີ່ ອັບຣາຮາມ ໄດ້ພາເຮັດ”
8:40 ແຕ່ວ່າ ບັດນີ້ພວກເຈົ້າຫາໂອກາດຂ້າເຮົາ ຜູ້ທີ່ນຳຄວາມຈິງຈາກພຣະເຈົ້າມາ-
ບອກໃຫ້ພວກເຈົ້າຟັງ ສ່ວນ ອັບຣາຮາມ ນັ້ນ ລາວກໍບໍ່ເຄີຍເຮັດແບບນີ້
8:41 “ແຕ່ພວກເຈົ້າ ກໍເຮັດນຳແນວທີ່ພໍ່ຂອງເຈົ້າພາເຮັດຕ່າງຫາກ” ແລ້ວພວກຢິວ
ນັ້ນເວົ້າເຍາະເຍີ້ຍໃສ່ເພິ່ນວ່າ “ພວກເຮົາບໍ່ໄດ້ເກີດຈາກການລ່ວງປະເວນີຄືເຈົ້າ
ດອກ ແລ້ວພວກເຮົາມີພໍ່ຢູ່ຜູ້ດຽວ ແມ່ນພຣະເຈົ້ານັ້ນເນາະ”
8:42 ພຣະເຢຊູ ເລີຍບອກພວກເຂົາວ່າ “ຄັນພຣະເຈົ້າໄດ້ເປັນພໍ່ຂອງພວກເຈົ້າອີ-
ຫລີ ພວກເຈົ້າຊິຕ້ອງຮັກແພງເຮົາ ຍ້ອນວ່າເຮົາໄດ້ມາຈາກພຣະເຈົ້າຜູ້ເພິ່ນທີ່ໃຊ້
ເຮົາມານີ້ ແລ້ວເຮົາບໍ່ໄດ້ມາຕາມໃຈມັກຂອງເຮົາ
8:43 ມັນເປັນຫຍັງ ພວກເຈົ້າບໍ່ເຂົ້າໃຈສຳນຽງເວົ້າຂອງເຮົາບໍ້ ຫລືວ່າໃຈພວກເຈົ້າບໍ່
ສາມາດຮັບຟັງຖ້ອຍຄຳຂອງເຮົາໄດ້
8:44 ຄືພວກເຈົ້າມາຈາກ ພະຍາມານ ຮ້າຍ ຜູ້ເປັນພໍ່ຂອງພວກເຈົ້າ ແລ້ວພວກເຈົ້າ
ມັກເຮັດຕາມໃຈມັກຂອງພໍ່ເຈົ້ານັ້ນ ທີ່ວ່າມັນເປັນຄາດຕະກອນແຕ່ຕົ້ນສະບັບມາ
ແລ້ວມັນບໍ່ເຄີຍຢືນຢູ່ໃນຄວາມຈິງເລີຍ ຍ້ອນວ່າມັນບໍ່ມີຄວາມສັດຈິງໃນໂຕມັນ
ເອງ ບັດມັນເວົ້າແນວຂີ້ຕົວະອອກມາ ມັນເວົ້າຈາກຄັງຂອງມັນເອງ ຍ້ອນວ່າມັນ
ເປັນເຈົ້າຂີ້ຕົວະ ກັບເປັນພໍ່ຂອງຄວາມຂີ້ຕົວະທັງໝົດ

8:45 ແລ້ວທີ່ວ່າເຮົາເວົ້າຄວາມຈິງໃຫ້ພວກເຈົ້າ ເປັນເຫດທີ່ພວກເຈົ້າຈັ່ງບໍ່ຍອມ
ເຊື່ອເຮົາ
8:46 ມີຜູ້ໃດແໜ່ ໃນພວກເຈົ້າທີ່ສາມາດຊີ້ໄດ້ວ່າເຮົາມີບາບໃນໂຕເອງ ແລ້ວຄັ່ນ
ເຮົາບອກແຕ່ແນວເປັນຈິງ ເປັນຫຍັງພວກເຈົ້າຈັ່ງບໍ່ຍອມເຊື່ອເຮົາ
8:47 ຄື ຜູ້ທີ່ຢູ່ຝ່າຍພຣະເຈົ້າ ກໍຮັບຟັງຖ້ອຍຄຳຂອງພຣະເຈົ້ານັ້ນ ຈັ່ງຊັ້ນທີ່ພວກເຈົ້າ
ບໍ່ຍອມຟັງເຮົານີ້ ກໍສະແດງວ່າພວກເຈົ້າບໍ່ໄດ້ຢູ່ຝ່າຍພຣະເຈົ້າເລີຍ”
8:48 ບັດນີ້ ພວກຜູ້ນຳຂອງຄົນ ຢິວ ຕອບເຍາະເຢີ້ຍໃສ່ ພຣະເຢຊູ ອີກວ່າ “ທີ່ພວກ
ເຮົາວ່າເຈົ້າເປັນຄົນ ຊາມາເຣຍ ກັບວ່າມີຜີຮ້າຍຢູ່ກໍຖືກແລ້ວ ແມ່ນບໍ່ເນາະ”
8:49 ພຣະເຢຊູ ເລີຍຕອບເຂົາວ່າ “ເຮົາບໍ່ມີຜີຮ້າຍດອກ ແຕ່ວ່າເຮົາໃຫ້ກຽດພຣະ-
ເຈົ້າຜູ້ເປັນພໍ່ຂອງເຮົາ ແລ້ວພວກເຈົ້າລົບຫລູ່ກຽດຂອງເຮົາ
8:50 ແລ້ວເຮົາບໍ່ຊອກຫາກຽດໃຫ້ໂຕເອງດອກ ແຕ່ວ່າມີອີກຜູ້ໜຶ່ງທີ່ຫາກຽດໃຫ້
ແລ້ວຕັດສິນດ້ວຍຄວາມຍຸດຕິທຳ
8:51 ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າ ‘ຜູ້ໃດທີ່ຍຶດໝັ້ນ ຮັກສາຄຳຂອງເຮົາ
ໄວ້ ຜູ້ນັ້ນຊິບໍ່ພໍ້ຄວາມຕາຍຈັກເທື່ອ’”
8:52 ແລ້ວພວກຜູ້ນຳຂອງຄົນ ຢິວ ກໍເວົ້າອີກວ່າ “ເວົ້າສ່ຳນີ້ເຮົາກໍຮູ້ວ່າເຈົ້າມີຜີຮ້າຍ
ແລ້ວ ຄື ອັບຣາຮາມ ກັບຜູ້ເປັນປາກເປັນສຽງກໍຕາຍໄປແລ້ວ ແລ້ວເຈົ້າກໍຍັງມາຫາ
ວ່າ ຄົນທີ່ຍຶດໝັ້ນໃນຄຳຂອງເຈົ້າຊິບໍ່ຮູ້ຈັກລົດຊາດຂອງຄວາມຕາຍຈັກເທື່ອ
8:53 ສ່ຳເຈົ້ານີ້ ໃຫຍ່ກວ່າບັນພະບຸລຸດ ອັບຣາຮາມ ອີກບໍ້ ຄື ລາວ ໄດ້ຕາຍໄປແລ້ວ
ແລ້ວພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າກໍໄດ້ຕາຍໄປໝົດແລ້ວຄືກັນ ເຈົ້າ
ຄຶດວ່າເຈົ້າເປັນຜູ້ດີເດັ່ນມາແຕ່ໃສ”
8:54 ພຣະເຢຊູ ເລີຍຕອບວ່າ “ຄັ່ນເຮົາຫາກຽດໃຫ້ໂຕເອງ ກຽດແນວນັ້ນບໍ່ມີປະ-
ໂຫຍດຫຍັງ ແມ່ນພຣະເຈົ້າຜູ້ເປັນພໍ່ຂອງເຮົານີ້ເນາະ ທີ່ໃຫ້ກຽດເຮົາຕ່າງຫາກ
ແມ່ນຜູ້ນັ້ນເນາະທີ່ພວກເຈົ້າຫາວ່າເປັນພຣະເຈົ້າ ຂອງພວກເຈົ້າເອງ
8:55 ພວກເຈົ້າບໍ່ຮູ້ຈັກເພິ່ນດອກ ແຕ່ວ່າເຮົານີ້ຮູ້ຈັກກັບເພິ່ນ ແລ້ວຄັ່ນເຮົາຊິປະຕິ-
ເສດວ່າເຮົາບໍ່ຮູ້ຈັກກັບເພິ່ນ ເຮົາກໍເປັນຄົນຂີ້ຕົວະຄືກັນກັບພວກເຈົ້ານີ້ ແຕ່ວ່າເຮົາ
ຮູ້ຈັກເພິ່ນອີຫລີ ແລ້ວກໍຍຶດໝັ້ນຮັກສາຄຳຂອງເພິ່ນນຳ

8:56 ປູ່ທວດ ອັບຣາຮາມ ຂອງພວກເຈົ້າມີຄວາມຍິນດີທີ່ຈະເຫັນມື້ຂອງເຮົາ ລາວ
ໄດ້ຮູ້ໄດ້ເຫັນແລ້ວ ຈຶ່ງດີອົກດີໃຈຫລາຍ” *(ໃຫ້ເບິ່ງ ປະຖົມມະການ 12:1-3)*
8:57 ບັດນີ້ ພວກຜູ້ນຳຂອງຄົນ ຢິວ ກໍເຍາະເຍີ້ຍ ພຣະເຢຊູ ວ່າ “ອາຍຸເຈົ້າຍັງບໍ່ທັນ
ໄດ້ຮອດຫ້າສິບປີຊ້ຳ ແລ້ວເຈົ້າເຄີຍເຫັນ ອັບຣາຮາມ ຢູ່ໃສ”
8:58 ພຣະເຢຊູ ເລີຍເວົ້າວ່າ “ເຮົາຈະບອກພວກເຈົ້າຕາມຊື່ນີ້ເນາະ ວ່າກ່ອນທີ່ ອັບ-
ຣາຮາມ ບໍ່ທັນເກີດພູ້ນ ເຮົາດຳລົງຢູ່ແລ້ວ”
8:59 ບັດນີ້ພວກຢິວນັ້ນກໍພາກັນຈັບກ້ອນຫີນຂຶ້ນມາ ແລ້ວວ່າຈະແກວ່ງໃສ່ ພຣະເຢ-
ຊູ ແຕ່ວ່າເພິ່ນຫລົບໂຕຈາກພວກເຂົາຍ່າງຜ່ານພວກເຂົາອອກໄປ

## ໂຢຮັນ ບົດທີ 9

9:1 ຕອນ ພຣະເຢຊູ ພວມຍ່າງຜ່ານພວກເຂົາໄປນັ້ນ ເພິ່ນໄດ້ເຫັນຜູ້ຊາຍຄົນໜຶ່ງ ທີ່
ຕາບອດມາແຕ່ເກີດ
9:2 ບັດນີ້ລູກສິດຖາມ ພຣະເຢຊູ ວ່າ ອາຈານ ແມ່ນບາບຂອງໃຜແໜ່ ທີ່ເຮັດໃຫ້ຜູ້-
ຊາຍຜູ້ນີ້ຕາບອດມາແຕ່ເກີດ ແມ່ນບາບຂອງເຂົາບໍ້ ຫລືບາບຂອງພໍ່ແມ່ເຂົາ
9:3 ພຣະເຢຊູ ຕອບວ່າ ຜູ້ນີ້ກັບພໍ່ແມ່ຂອງເຂົາບໍ່ໄດ້ເຮັດບາບກຳອີຫຍັງທີ່ເປັນເຫດ
ດອກ ແຕ່ເພື່ອໃຫ້ການງານອັນຍິ່ງໃຫຍ່ຂອງພຣະເຈົ້າປາກົດຜ່ານທາງໂຕຂອງ
ຜູ້ຊາຍຜູ້ນີ້
9:4 ແລ້ວເຮົາຈະຕ້ອງເຮັດການງານຂອງພຣະເຈົ້າ ຜູ້ທີ່ໃຊ້ເຮົາມາໃຫ້ສຳເລັດໃນ
ຍາມແຈ້ງ ຍ້ອນຍາມມືດພວມຈະມາ ທີ່ຈະບໍ່ມີໃຜເຮັດການເຮັດງານໄດ້ເລີຍ
9:5 ບັດຍາມເຮົາຍັງຢູ່ໃນໂລກ ເຮົາເປັນຄວາມສະຫວ່າງຂອງຊາວໂລກ
9:6 ພໍເວົ້າແລ້ວ ພຣະເຢຊູ ກໍຖົ່ມນ້ຳລາຍລົງດິນ ເຮັດພໍເປັນກ້ອນດິນໜຽວ ແລ້ວກໍ
ເອົານ້ຳລາຍປະສົມດິນນັ້ນ ທາໃສ່ຕາຂອງຜູ້ຊາຍຜູ້ນັ້ນ
9:7 ແລ້ວບອກເຂົາວ່າ ໃຫ້ໄປລ້າງຕາໃນສະ ສີໂລອາມ ເດີ້ (“ສະ ສີໂລອາມ ” ແປ
ວ່າ ຊຶ່ງຖືກໃຊ້ໄປ) ເຂົາຈຶ່ງໄປລ້າງອອກ ແລ້ວກັບມາເຫັນຮຸ່ງໄດ້ແລ້ວ
9:8 ບັດນີ້ ໄທບ້ານກັບຄົນອື່ນໆ ທີ່ເຄີຍເຫັນຄົນຕາບອດຜູ້ນີ້ມາກ່ອນ ຈຶ່ງຖາມກັນ
ວ່າ “ໂອ໋ ຜູ້ນີ້ບໍ່ແມ່ນຄົນຕາບອດນັ້ນຊັ່ນບໍ້ ທີ່ເຄີຍນັ່ງຂໍທານ”

9:9 ຜູ້ລາງຄົນກໍວ່າ "ເອີ ແມ່ນຜູ້ນີ້ເນາະ" ອີກຜູ້ລາງຄົນກໍວ່າ "ຜູ້ນີ້ໜ້າຕາຄືກັນຊື່ໆ"
ແຕ່ຜູ້ຊາຍຜູ້ນັ້ນບອກວ່າ "ຂ້ອຍນີ້ ແມ່ນຜູ້ນັ້ນເນາະ"
9:10 ບັດນີ້ ພວກເຂົາສອບຖາມຄົນນັ້ນວ່າ "ເຮັດຈັ່ງໃດຕາເຈົ້າຈັ່ງເຊົາບອດເຫັນຮຸ່ງ
ໄດ້"
9:11 ຄົນຕາບອດເລີຍບອກວ່າ "ມີຄົນຊື່ວ່າ ເຢຊູ ໄດ້ເອົາດິນໜຽວມາທາຕາຂ້ອຍ
ແລ້ວກໍບອກຂ້ອຍວ່າ 'ໃຫ້ໄປລ້າງຕາໃນສະ ສີໂລອາມ ' ຂ້ອຍເລີຍໄປລ້າງອອກ
ແລ້ວຈັ່ງເຫັນຮຸ່ງໄດ້"
9:12 ພວກຄົນນັ້ນກໍຖາມວ່າ "ເພິ່ນຢູ່ໃສ" ຜູ້ຊາຍຜູ້ນັ້ນຕອບວ່າ "ຂ້ອຍກໍບໍ່ຮູ້ຈັກ"
9:13 ພວກເຂົາໄດ້ພາຜູ້ຊາຍຜູ້ທີ່ເຄີຍຕາບອດນັ້ນໄປຫາພວກຄະນະ ຟາຣີຊາຍ
9:14 ມື້ທີ່ ພຣະເຢຊູ ໄດ້ເຮັດດິນໜຽວປົວຄົນຕາບອດນັ້ນ ພໍດີແມ່ນວັນຊະບາໂຕ ມື້
ຢຸດພັກງານຂອງພວກຢິວ
9:15 ບັດນີ້ ພວກຄະນະ ຟາຣີຊາຍ ໄດ້ຖາມຜູ້ຊາຍຜູ້ນັ້ນຊ້ຳອີກ ເຖິງເຫດທີ່ຕາຂອງ
ເຂົາເຊົາບອດເຫັນຮຸ່ງໄດ້ ຜູ້ຊາຍຜູ້ນັ້ນເລີຍເວົ້າໃຫ້ເຂົາຟັງວ່າ "ເພິ່ນກໍເອົາດິນໜ
ຽວມາທາຕາຂ້ອຍ ພໍຂ້ອຍໄປລ້າງອອກແລ້ວ ຂ້ອຍກໍເຫັນຮຸ່ງ ໂລດ "
9:16 ແລ້ວ ຟາຣີຊາຍ ຜູ້ລາງຄົນກໍເລີຍເວົ້າວ່າ "ຜູ້ນັ້ນບໍ່ໄດ້ມາຈາກພຣະເຈົ້າດອກ
ຍ້ອນວ່າເຂົາບໍ່ຮັກສາວັນຊະບາໂຕ ມື້ຢຸດພັກງານຂອງເຮົາໄວ້" ອີກຜູ້ລາງຄົນກໍ
ຄັດຄ້ານວ່າ "ຄົນບາບຊິສາມາດເຮັດເຄື່ອງໝາຍອັນສຳຄັນຂະໜາດນີ້ໄດ້ຈັ່ງໃດ"
ກໍເລີຍເກີດການຂັດແຍ້ງກັນລະຫວ່າງພວກຄະນະ ຟາຣີຊາຍ ໃນເລື່ອງນີ້
9:17 ພວກເຂົາກໍເລີຍຖາມຜູ້ຊາຍຜູ້ທີ່ເຄີຍຕາບອດນັ້ນວ່າ "ເຈົ້າວ່າຈັ່ງໃດ ເລື່ອງຜູ້-
ນັ້ນ ທີ່ວ່າເຂົາປົວຕາຂອງເຈົ້າເຊົາບອດເຫັນຮຸ່ງໄດ້" ຜູ້ຊາຍຜູ້ນັ້ນກໍຕອບວ່າ "ເພິ່ນ
ຕ້ອງເປັນຜູ້ເປັນປາກເປັນສຽງຂອງພຣະເຈົ້າ"
9:18 ແຕ່ວ່າບັດນີ້ພວກຫົວໜ້າ ຢິວ ບໍ່ຍອມເຊື່ອຜູ້ຊາຍຜູ້ນັ້ນ ທີ່ວ່າເຄີຍຕາບອດມາ
ແຕ່ເກີດແລ້ວກັບມາເຫັນຮຸ່ງໄດ້ ພວກເຂົາກໍເລີຍເອີ້ນພໍ່ແມ່ຂອງຜູ້ຊາຍຜູ້ທີ່ເຄີຍ
ຕາບອດແລ້ວເຫັນຮຸ່ງໄດ້ນັ້ນມາ
9:19 ແລ້ວພວກເຂົາຈັ່ງຖາມພໍ່ແມ່ນັ້ນວ່າ "ແມ່ນຜູ້ນີ້ບໍ້ ລູກຊາຍຂອງເຈົ້ານັ້ນ ທີ່ເຈົ້າ
ວ່າຕາບອດມາແຕ່ເກີດ ບັດນີ້ເຂົາເຫັນຮຸ່ງໄດ້ແນວໃດຊັ້ນ"

9:20 ພໍ່ແມ່ຂອງຜູ້ຊາຍຜູ້ນັ້ນກໍເລີຍຕອບພວກເຂົາວ່າ “ເອີ້ ແມ່ນຜູ້ນີ້ເນາະ ລູກຊາຍ
ຂອງຜູ້ຂ້າ ແລ້ວຜູ້ຂ້າກໍຮູ້ຢູ່ວ່າ ເຂົາຕາບອດມາແຕ່ເກີດອີຫລີ”
9:21 “ແຕ່ວ່າການທີ່ເຂົາເຫັນຮຸ່ງໄດ້ແລ້ວນັ້ນ ຜູ້ຂ້າກໍບໍ່ຮູ້ວ່າມັນເປັນໄປໄດ້ແນວໃດ
ກັບບໍ່ຮູ້ຈັກວ່າ ແມ່ນໃຜປົວຕາຂອງເຂົາໃຫ້ເຫັນຮຸ່ງໄດ້ ເຂົາກໍເປັນຜູ້ໃຫຍ່ແລ້ວ
ໃຫ້ຖາມເຂົາເບິ່ງ ເຂົາຊິບອກເອງ”
9:22 ພໍ່ແມ່ຂອງເຂົາໄດ້ເວົ້າໄວ້ຈັ່ງຊັ້ນ ຍ້ອນວ່າຢ້ານພວກຫົວໜ້າຄົນ ຢິວ ທີ່ວ່າ
ພວກຢິວນັ້ນໄດ້ຕົກລົງກັນໄວ້ແລ້ວວ່າ ຄັ່ນຜູ້ໃດຮັບປາກວ່າ ພຣະເຢຊູ ເປັນ ພຣະ-
ຄຣິດ ພຣະຜູ້ໂຜດນັ້ນ ກໍຊິຖືກຕັດອອກຈາກສະໂມສອນສາລາທຳ
9:23 ເປັນຍ້ອນເຫດນີ້ເນາະ ທີ່ພໍ່ແມ່ຈັ່ງໄດ້ເວົ້າວ່າ “ເຂົາເປັນຜູ້ໃຫຍ່ແລ້ວ ໃຫ້ຖາມ
ເຂົາເອົາເອງ”
9:24 ບັດນີ້ ພວກຫົວໜ້າຄົນ ຢິວ ກໍເລີຍເອີ້ນໃຫ້ຜູ້ຊາຍຜູ້ທີ່ເຄີຍຕາບອດໃຫ້ມາອີກ
ແລ້ວບອກເຂົາວ່າ “ເຈົ້າຕ້ອງໃຫ້ກຽດພຣະເຈົ້າເດີ້ ແຕ່ສ່ວນຜູ້ນັ້ນ ເຮົາຮູ້ຈັກວ່າ
ເຂົາເປັນຄົນບາບຊື່ໆ”
9:25 ຜູ້ຊາຍຜູ້ນັ້ນກໍເລີຍຕອບວ່າ “ເພິ່ນຜູ້ນີ້ເປັນບາບຫລືບໍ່ເປັນ ຂ້ອຍກໍບໍ່ຈັກນຳ
ເຂົາ ແຕ່ຂ້ອຍຮູ້ຈັກວ່າ ຂ້ອຍເຄີຍຕາບອດມາກ່ອນ ແລ້ວບັດນີ້ຂ້ອຍເຫັນຮຸ່ງໄດ້
ແລ້ວ”
9:26 ແລ້ວພວກຫົວໜ້າ ຢິວ ໄດ້ຖາມເຂົາຊ້ຳອີກວ່າ “ຜູ້ນັ້ນໄດ້ເຮັດຫຍັງໃຫ້ເຈົ້າແໜ່
ເຂົາປົວຕາເຈົ້າໄດ້ແນວໃດເຖິງເຫັນຮຸ່ງໄດ້”
9:27 ຄົນນັ້ນຕອບວ່າ “ໂອ໋ ຂ້ອຍໄດ້ບອກພວກເຈົ້າມາແລ້ວ ກໍຍັງບໍ່ຟັງ ເປັນຫຍັງຄື
ຢາກຟັງອີກ ພວກເຈົ້າຄຶດຢາກຊິເຂົ້າເປັນລູກສິດຂອງເພິ່ນນຳຊັ່ນບໍ້”
9:28 ບັດນີ້ ພວກຫົວໜ້າ ຢິວ ຈັ່ງເວົ້າໃສ່ຜູ້ຊາຍນັ້ນວ່າ “ເຈົ້ານີ້ເນາະ ເປັນລູກສິດ
ຂອງເຂົາ ຝ່າຍພວກເຮົາກໍເປັນລູກສິດຂອງ ໂມເຊ
9:29 ສ່ວນ ໂມເຊ ນີ້ ພວກເຮົາກໍຮູ້ດີວ່າ ພຣະເຈົ້າໄດ້ເວົ້າກັບ ລາວ ອີຫລີ ແຕ່ຝ່າຍ
ຄົນນັ້ນ ເຮົາບໍ່ຮູ້ຈັກວ່າ ເຂົາມາແຕ່ໃສ”

9:30 ຜູ້ຊາຍຜູ້ນັ້ນກໍເລີຍຕອບພວກເຂົາວ່າ “ໂອ໋ ແປກໃຈເປັນຕາງຶດແທ້ ທີ່ວ່າພວກ
ເຈົ້າຍັງບໍ່ຮັບຮູ້ໃນເພິ່ນ ວ່າເພິ່ນມາແຕ່ໃສ ຂະໜາດຕາຂອງຂ້ອຍເພິ່ນກໍຍັງປົວໃຫ້
ເຫັນຮຸ່ງໄດ້

9:31 ຄົນເຮົາຮູ້ກັນດີວ່າ ພຣະເຈົ້າບໍ່ໄດ້ຮັບຟັງຄົນບາບດອກ ແຕ່ສ່ວນຜູ້ໃດທີ່ເຄົາ-
ລົບເຄົາລົບກັບເຮັດຕາມຈຸດປະສົງຂອງພຣະເຈົ້າ ເພິ່ນກໍຊິຮັບຟັງເຂົາ

9:32 ຄື ຕັ້ງແຕ່ເລີ່ມແຮກຂອງໂລກມາ ບໍ່ເຄີຍໄດ້ຍິນວ່າມີໃຜສາມາດປົວຄົນທີ່ຕາ-
ບອດມາແຕ່ເກີດ ໃຫ້ເຫັນຮຸ່ງໄດ້

9:33 ຄັ່ນແມ່ນຄົນຜູ້ນີ້ບໍ່ໄດ້ມາຈາກພຣະເຈົ້າ ຄືຊິບໍ່ສາມາດເຮັດຫຍັງໄດ້ດອກ”

9:34 ແລ້ວພວກຫົວໜ້າ ຢິວ ກໍເວົ້າໃສ່ຜູ້ຊາຍຜູ້ນັ້ນວ່າ “ໂອ້ ຂະໜາດມຶງນີ້ເປັນຄົນ
ຂີ້ບາບມາແຕ່ເກີດ ບັດນີ້ຊິມາສອນພວກອາຈານເຮົານີ້ຊັ່ນບໍ້” ພໍເວົ້າແລ້ວພວກ
ຫົວໜ້າ ຢິວ ກໍເລີຍໄລ່ເຂົາ ຕັດອອກຈາກສະມາຊິກສາລາທຳ

9:35 ພໍ ພຣະເຢຊູ ໄດ້ຍິນວ່າ ພວກຫົວໜ້າ ຢິວ ໄດ້ໄລ່ຜູ້ຊາຍຜູ້ນັ້ນອອກຈາກສະ-
ມາຊິກສາລາທຳ ເພິ່ນກໍເລີຍໄປຫາເຂົາ ແລ້ວຖາມວ່າ “ເຈົ້າເຊື່ອໃນເລື່ອງ ພຣະ-
ບຸດ ຂອງພຣະເຈົ້າບໍ່”

9:36 ຜູ້ຊາຍຜູ້ນັ້ນກໍເວົ້າວ່າ “ເອີ້ ຜູ້ນັ້ນແມ່ນໃຜ ຊ່ອຍບອກມານາຍເຈົ້າຂ້າເອີຍ ເພື່ອ
ຂ້ອຍຊິໄດ້ຮັບເຊື່ອໃນເພິ່ນນຳ”

9:37 ພຣະເຢຊູ ກໍເລີຍບອກເຂົາວ່າ “ເຈົ້າເຄີຍເຫັນຜູ້ນັ້ນແລ້ວ ຄືແມ່ນຜູ້ນັ້ນເນາະ
ທີ່ພວມເວົ້ານຳເຈົ້າຢູ່ດຽວນີ້”

9:38 ຜູ້ຊາຍຜູ້ນັ້ນເວົ້າວ່າ “ນາຍຜູ້ຂ້າເອີຍ ຜູ້ຂ້າເຊື່ອ” ແລ້ວເຂົາໄດ້ຄຸກເຂົ່າລົງຂາບ
ນະມັດສະການ ພຣະເຢຊູ

9:39 ແລ້ວ ພຣະເຢຊູ ເວົ້າວ່າ “ສ່ວນເຮົາໄດ້ມາໃນໂລກນີ້ ຍ້ອນການພິພາກສາຕັດ-
ສິນ ເພື່ອຄົນທີ່ບໍ່ຮູ້ບໍ່ເຫັນ ຊິໄດ້ເຫັນ ກັບເພື່ອຄົນທີ່ໄດ້ຮູ້ໄດ້ເຫັນ ຊິກັບເປັນຄົນ
ຕາບອດ”

9:40 ບັດນີ້ ພວກຄະນະ ຟາຣີຊາຍ ຜູ້ລາງຄົນທີ່ຢູ່ກັບ ພຣະເຢຊູ ນັ້ນ ພໍໄດ້ຍິນເພິ່ນ
ເວົ້າຖ້ອຍຄຳນັ້ນ ກໍຖາມເພິ່ນວ່າ “ໂອ໋ ໝາຍຄວາມວ່າ ພວກເຮົາກໍຕາບອດຄືກັນ
ຊັ່ນບໍ້”

9:41 ພຣະເຢຊູ ຕອບເຂົາວ່າ “ຄັນພວກເຈົ້າຕາບອດອີຫລີ ເຈົ້າກໍບໍ່ເປັນບາບດອກ
ແຕ່ບັດພວກເຈົ້າເວົ້າວ່າ ‘ພວກເຮົາເຫັນຮູ້ເລື່ອງດີແລ້ວ’ ຈັ່ງຊັ້ນບາບຂອງພວກ
ເຈົ້າກໍຍັງຄົງຢູ່”

## ໂຢຮັນ ບົດທີ 10

10:1 ພຣະເຢຊູ ເວົ້າວ່າ “ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະວ່າ ຄົນທີ່ບໍ່ໄດ້ເຂົ້າໄປ
ໃນຄອກແກະທາງປະຕູ ແຕ່ວ່າໄດ້ປີນເຂົ້າໄປທາງອື່ນໆ ຄົນແບບນັ້ນແມ່ນຂະ-
ໂມຍກັບໂຈນຜູ້ຮ້າຍ
10:2 ແຕ່ສ່ວນຜູ້ເຂົ້າໄປທາງປະຕູ ກໍແມ່ນຜູ້ລ້ຽງຂອງແກະນັ້ນເນາະ
10:3 ແລ້ວຍາມຜູ້ເຝົ້າປະຕູກໍຊິເປີດໃຫ້ ລາວ ແລ້ວສ່ວນແກະນັ້ນ ກໍໄດ້ຟັງສຽງເວົ້າ
ຂອງ ລາວ ແລ້ວຜູ້ລ້ຽງແກະກໍຊິເອີ້ນແກະຂອງ ລາວ ຕາມຊື່ຂອງມັນ ແລ້ວນໍາ
ແກະອອກຈາກຄອກນັ້ນໄປ
10:4 ແລ້ວບັດອອກມາຈາກຄອກນັ້ນ ຜູ້ລ້ຽງອອກມາກ່ອນ ແລ້ວແກະຕາມຫລັງ
ລາວ ມາ ຍ້ອນວ່າມັນຮູ້ຈັກສຽງຂອງເຈົ້າຂອງ
10:5 ແຕ່ມັນຊິບໍ່ຍອມໄປນໍາຄົນແປກໜ້າເລີຍ ແຕ່ຊິແລ່ນໜີຈາກຜູ້ນັ້ນ ຍ້ອນມັນບໍ່
ຮູ້ຈັກສຽງຂອງຜູ້ແປກໜ້ານັ້ນ”
10:6 ພຣະເຢຊູ ໄດ້ເວົ້າເລື່ອງປຽບທຽບນີ້ໃຫ້ພວກເຂົາຟັງ ແຕ່ວ່າພວກເຂົາບໍ່ເຂົ້າ-
ໃຈໃນຄໍາທີ່ເພິ່ນເວົ້າເລີຍ
10:7 ແລ້ວ ພຣະເຢຊູ ໄດ້ເວົ້າໃຫ້ເຂົາວ່າ “ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າ
ເຮົານີ້ເນາະ ປຽບເປັນປະຕູຂອງຄອກແກະນັ້ນເອງ”
10:8 ສ່ວນຜູ້ຄົນທີ່ເຄີຍມາກ່ອນເຮົາ ກໍແມ່ນຂະໂມຍກັບໂຈນໝົດ ແຕ່ພວກແກະບໍ່
ໄດ້ຟັງສຽງຂອງເຂົາດອກ
10:9 ເຮົານີ້ເນາະເປັນປະຕູນັ້ນ ຄັນຜູ້ໃດເຂົ້າມາທາງເຮົາ ຜູ້ນັ້ນກໍຊິລອດພົ້ນຈາກ
ບາບຂອງເຂົາ ແລ້ວເຂົາຊິໄປມາ ຢ່າງປອດໄພ ແລ້ວຊິພໍ້ແນວຢູ່ແນວກິນ
10:10 ສ່ວນພວກຂະໂມຍນັ້ນ ເຂົ້າມາກໍເພື່ອຊິລັກຊິຂ້າເອົາຊື່ໆ ແຕ່ສ່ວນເຮົານີ້ ມາ
ເພື່ອຄົນຊິໄດ້ມີຊີວິດ ແລ້ວໄດ້ຊີວິດຢ່າງສົມບູນແບບ
10:11 ເຮົານີ້ເປັນຜູ້ລ້ຽງທີ່ດີ ແລ້ວຜູ້ລ້ຽງທີ່ດີຍິນດີສະລະຊີວິດເພື່ອແກະຂອງໂຕ

10:12 ແຕ່ສ່ວນຜູ້ຮັບຈ້າງ ຊຶ່ງບໍ່ແມ່ນຜູ້ລ້ຽງນັ້ນ ກັບບໍ່ແມ່ນເຈົ້າຂອງແກະ ບັດເຫັນໝ
າປ່າມາ ເຂົາກໍປະຖິ້ມແກະໜີໄປ ແລ້ວໝາປ່ານັ້ນກໍເຂົ້າໄປໄລ່ກັດເອົາແກະ ໃຫ້
ແຕກກະຈາຍໄປໝົດ
10:13 ລູກຈ້າງແລ່ນໜີຍ້ອນວ່າເປັນລູກຈ້າງຊື່ໆ ບໍ່ໄດ້ສົນໃຈໃນແກະດອກ
10:14 ເຮົານີ້ເປັນຜູ້ລ້ຽງທີ່ດີນັ້ນ ເຮົາຮູ້ຈັກແກະຂອງເຮົາ ແລ້ວແກະຂອງເຮົາກໍຮູ້ຈັກ
ເຮົາ
10:15 ພຣະເຈົ້າຜູ້ເປັນພໍ່ຮູ້ຈັກເຮົາດີສໍ່າໃດ ເຮົາກໍຮູ້ຈັກເພິ່ນດີສໍ່ານັ້ນຄືກັນ ແລ້ວເຮົາ
ຍອມສະລະຊີວິດເພື່ອແກະຂອງເຮົາ
10:16 ແລ້ວເຮົາມີຝູງແກະຄອກອື່ນໆ ອີກທີ່ບໍ່ໄດ້ຢູ່ໃນຄອກນີ້ ສ່ວນຝູງແກະອື່ນໆ
ນັ້ນ ເຮົາຊິຕ້ອງເອົາມັນມາ ແລ້ວມັນຊິຟັງສຽງຂອງເຮົາ ເພື່ອໃນທີ່ສຸດຊິມີແຕ່ຝູງ
ດຽວ ແລ້ວມີຜູ້ລ້ຽງແຕ່ຜູ້ດຽວ *(ໃຫ້ເບິ່ງ ພຣະນິມິດ 5:9)*
10:17 ຈັ່ງຊັ້ນ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ກໍຮັກແພງເຮົາຫລາຍ ຍ້ອນວ່າເຮົາວາງ
ຊີວິດຂອງເຮົາລົງ ເພື່ອເຮົາຊິຮັບຊີວິດຂອງເຮົາຄືນມາອີກ
10:18 ແລ້ວບໍ່ມີໃຜຖືເອົາເອົາຊີວິດຈາກເຮົາໄປດອກ ແຕ່ວ່າເຮົາຍອມສະລະໂດຍ
ໃຈສະໝັກຂອງເຮົາເອງ ຄືເຮົາມີສິດທີ່ຊິວາງລົງເອງ ແລ້ວກໍມີສິດທີ່ຊິເອົາຄືນມາ
ອີກໄດ້ ຄໍາສັ່ງນີ້ເຮົາໄດ້ຮັບຈາກພຣະເຈົ້າຜູ້ເປັນພໍ່ເຮົາ
10:19 ຈັ່ງຊັ້ນ ໄດ້ເກີດມີການຂັດແຍ້ງກັນລະຫວ່າງພວກຄົນ ຢິວ ອີກ ຍ້ອນຖ້ອຍຄໍາ
ຂອງ ພຣະເຢຊູ ທີ່ເພິ່ນເວົ້າມານີ້
10:20 ແລ້ວມີຫລາຍຄົນເວົ້າວ່າ "ຜູ້ນີ້ຖືກຜີເຂົ້າແລ້ວ ໄປຟັງເຂົາເຮັດຫຍັງ"
10:21 ສ່ວນອີກຜູ້ລາງຄົນກໍເວົ້າວ່າ "ໂອ່ ຄົນຖືກຜີເຂົ້າ ຊິບໍ່ເວົ້າຖ້ອຍຄໍາແບບນີ້ດອກ
ສໍ່າຜີມັນຊິສາມາດປົວຄົນຕາບອດໃຫ້ເຫັນຮຸ່ງໄດ້ບໍ້"
10:22 ຕອນນັ້ນເປັນລະດູໜາວ ມີງານລ້ຽງສະຫລອງຄົບອ້ອມການມອບຖວາຍວິ-
ຫານຢູ່ເມືອງ ເຢຣູຊາເລັມ
10:23 ແລ້ວບັດ ພຣະເຢຊູ ພວມຍ່າງໄປຢູ່ໃນບໍລິເວນວິຫານຢູ່ທາງເດີນລະບຽງ ໂຊ-
ໂລໂມນ

10:24 ບັດນີ້ ພວກຄົນ ຢິວ ມາອ້ອມຖາມເພິ່ນວ່າ “ນາຍຊິປ່ອຍພວກຜູ້ຂ້າໄວ້ຢູ່ໃນ
ຄວາມສົງໄສໂດນປານໃດ ຄັ່ນນາຍເປັນ ພຣະຄຣິດ ພຣະຜູ້ໂຜດອິຫລີນັ້ນ ກໍໃຫ້
ບອກພວກເຮົາມາໃຫ້ມັນຄັກແນ່”
10:25 ພຣະເຢຊູ ເລີຍຕອບພວກເຂົາວ່າ “ຂະໜາດເຮົາເຄີຍບອກພວກເຈົ້າມາ
ຫລາຍເທື່ອແລ້ວ ເຈົ້າກໍຍັງບໍ່ເຊື່ອເລີຍ ການງານແນວທີ່ເຮົາເຮັດນີ້ ກໍເຮັດແຕ່ໃນ
ນາມຂອງພຣະເຈົ້າຜູ້ເປັນພໍ່ຂອງເຮົາ ແລ້ວການງານນັ້ນເນາະ ກໍເປັນຫຼັກຖານ
ພະຍານຢືນຢັນເຖິງໂຕເຮົາແລ້ວ”
10:26 “ແຕ່ວ່າເຫດທີ່ພວກເຈົ້າບໍ່ເຊື່ອນີ້ ຍ້ອນວ່າພວກເຈົ້າບໍ່ແມ່ນແກະຂອງເຮົາ
ດອກ”
10:27 “ຄືແກະຂອງເຮົາຍອມຟັງສຽງຂອງເຮົາ ເຮົາຮູ້ຈັກແກະຂອງເຮົາ ແລ້ວແກະ
ຂອງເຮົານັ້ນກໍຕິດຕາມເຮົາມາ”
10:28 “ແລ້ວເຮົາໃຫ້ຊີວິດອັນຕະຫລອດໄປເປັນນິດກັບເຂົາ ເຂົາຈັ່ງຊິບໍ່ຕາຍພິນາດ
ໄປຈັກເທື່ອ ແລ້ວບໍ່ມີໃຜຊິສາມາດແຍ່ງຊິງເຂົາອອກຈາກມືຂອງເຮົາໄປ”
10:29 “ຍິ່ງກວ່ານັ້ນອີກ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຜູ້ເພິ່ນທີ່ໄດ້ມອບແກະໄວ້ໃຫ້
ກັບເຮົາ ເພິ່ນເປັນໃຫຍ່ກວ່າໝົດຄູ່ອັນຄູ່ແນວ ແລ້ວແຮງບໍ່ມີໃຜສາມາດແຍ່ງຊິງ
ເອົາເຂົາອອກຈາກມືຂອງເພິ່ນເລີຍ”
10:30 “ແລ້ວເຮົາກັບພຣະເຈົ້າຜູ້ເປັນພໍ່ ຮ່ວມກັນເປັນອັນໜຶ່ງອັນດຽວກັນ”
10:31 ບັດນີ້ ພວກຄົນ ຢິວ ພາກັນຈັບກ້ອນຫີນຂຶ້ນມາອີກ ວ່າຊິແກວ່ງໃສ່ເພິ່ນ
10:32 ແຕ່ ພຣະເຢຊູ ບອກເຂົາວ່າ “ເຮົາໄດ້ສະແດງການດີຫລາຍອັນຫລາຍແນວ
ມາຈາກພຣະເຈົ້າຜູ້ເປັນພໍ່ເຮົາໃຫ້ພວກເຈົ້າເຫັນ ແລ້ວແມ່ນການດີອັນໃດໃນແນວ
ໝູ່ນີ້ແໜ່ ທີ່ເປັນເຫດໃຫ້ພວກເຈົ້າຄຶດຢາກຊິເອົາຫີນແກວ່ງໃສ່ເຮົາ”
10:33 ພວກຄົນ ຢິວ ຕອບມາວ່າ “ບໍ່ແມ່ນເຮົາຢາກແກວ່ງກ້ອນຫີນໃສ່ເຈົ້າ ຍ້ອນ
ການດີຂອງເຈົ້າໄດ້ເຮັດດອກ ແຕ່ວ່າຍ້ອນການທີ່ເຈົ້າລົບຫລູ່ທຳລາຍພຣະນາມ
ຂອງພຣະເຈົ້າ ແລ້ວຍ້ອນວ່າເຈົ້າພຽງແຕ່ເປັນຄົນທຳມະດາ ໄດ້ຍົກໂຕຂຶ້ນໃຫ້
ເທົ່າທຽມພຣະເຈົ້າ”

10:34 ພຣະເຢຊູ ຕອບວ່າ “ບໍ່ແມ່ນບໍ້ ທີ່ວ່າມີຄຳຂອງພຣະເຈົ້າຂຽນໄວ້ໃນບົດບັນ-
ຍັດຂອງພວກເຈົ້າທີ່ເພິ່ນບອກວ່າ ‘ພວກເຈົ້າກໍເປັນຄືພະຄືເຈົ້າ’” *(ໃຫ້ເບິ່ງ ເພງ-
ສັນລະເສີນ 82:6)*
10:35 “ຄັນວ່າ ພຣະເຈົ້າໄດ້ເອີ້ນຜູ້ທີ່ຮັບມອບ ພຣະຄຳ ຂອງເພິ່ນວ່າ ‘ເປັນຄືພະຄື
ເຈົ້າ’ (ແລ້ວຊິຝ່າຝືນ ພຣະຄຳ ບໍ່ໄດ້ເລີຍ)”
10:36 “ຄັນບໍ່ຊັ້ນ ຄັນເຮົາເປັນຜູ້ນັ້ນທີ່ພຣະເຈົ້າຜູ້ເປັນພໍ່ໄດ້ເລືອກໄວ້ສະເພາະງານ
ນີ້ ແລ້ວໄດ້ໃຊ້ເຮົາເຂົ້າມາໃນໂລກ ເປັນຫຍັງພວກເຈົ້າຈັ່ງເວົ້າໃສ່ເຮົາວ່າ ‘ເຈົ້າໄດ້
ລົບຫລູ່ທຳລາຍພຣະນາມຂອງພຣະເຈົ້າ’ ຍ້ອນເຮົາໄດ້ເວົ້າວ່າ ເຮົາເປັນ ພຣະບຸດ
ຂອງພຣະເຈົ້າ ແນວນັ້ນບໍ້”
10:37 ຄັນເຮົາບໍ່ໄດ້ເຮັດການງານຂອງພຣະເຈົ້າຜູ້ເປັນພໍ່ເຮົາ ບໍ່ຕ້ອງເຊື່ອເຮົາເດີ້
10:38 ແຕ່ບັດນີ້ ຄັນເຮົາເຮັດການງານຂອງພຣະເຈົ້າອີຫລີ ເຖິງແມ່ນວ່າພວກເຈົ້າ
ບໍ່ຍອມເຊື່ອເຮົາກໍຢ່າ ກໍໃຫ້ເຊື່ອໃນຜົນງານທີ່ເຮົາໄດ້ເຮັດແລ້ວນັ້ນ ຊຶ່ງພິສູດວ່າ
ພຣະເຈົ້າຜູ້ເປັນພໍ່ໄດ້ສະຖິດຢູ່ໃນເຮົາ ແລ້ວເຮົາກໍຢູ່ໃນເພິ່ນນຳ
10:39 ຈັ່ງຊັ້ນ ພວກຫົວໜ້າຄົນ ຢິວ ຈັ່ງໄດ້ພະຍາຍາມຈັບ ພຣະເຢຊູ ອີກ ແຕ່ເພິ່ນ
ໄດ້ພົ້ນຈາກມືຂອງເຂົາໄປ
10:40 ແລ້ວເພິ່ນອອກໄປ ຂ້າມແມ່ນ້ຳ ຢໍດາເນ ເລີຍໄປອີກ ໄປຫາໜ້ອງທີ່ ໂຢຮັນ
ເລີ່ມໃຫ້ການຮັບການຈຸ່ມນ້ຳ ແລ້ວກໍໄປພັກຢູ່ນັ້ນ
10:41 ແລ້ວມີຫລາຍຄົນໄດ້ອອກມາຫາເພິ່ນ ເວົ້າກັນວ່າ “ ໂຢຮັນ ຜູ້ໃຫ້ຈຸ່ມນ້ຳນັ້ນ
ບໍ່ເຄີຍເຮັດເຄື່ອງໝາຍອັນສຳຄັນອີຫຍັງດອກ ແຕ່ວ່າຄູ່ອັນຄູ່ແນວທີ່ ລາວ ໄດ້ເວົ້າ
ເຖິງຜູ້ຊາຍຜູ້ນີ້ ກໍແມ່ນຄວາມຈິງຂອງ ລາວ ໝົດ”
10:42 ແລ້ວມີຫລາຍຄົນທີ່ໄດ້ຮັບເຊື່ອ ວາງໃຈໃນ ພຣະເຢຊູ ຢູ່ໜ້ອງນັ້ນ

## ໂຢຮັນ ບົດທີ 11

11:1 ບັດນີ້ ໄດ້ມີຜູ້ຊາຍຜູ້ໜຶ່ງທີ່ປ່ວຍຊື່ວ່າ ລາຊະໂລ ຊາວ ເບດທາເນຍ ແມ່ນບ້ານ
ດຽວກັນກັບນາງ ມາຣີອາ ກັບເອື້ອຍ ລາວ ຊື່ວ່າ ມາທາ

11:2 (ແມ່ນ ມາຣີອາ ຜູ້ນີ້ເນາະ ໃນອະນາຄົດທີ່ໄດ້ເອົານ້ຳມັນຫອມເທລູບໃສ່ຕີນ
ພຣະເຢຊູ ແລ້ວເອົາຜົມຂອງຕົນເຊັດຕີນຂອງເພິ່ນ ແມ່ນ ລາຊະໂລ ນ້ອງຊາຍ
ຂອງນາງນັ້ນ ຊຶ່ງປ່ວຍຢູ່)
11:3 ບັດນີ້ ສອງເອື້ອຍນ້ອງນັ້ນກໍໃຊ້ຄົນໃຫ້ໄປບອກ ພຣະເຢຊູ ວ່າ ນາຍເຈົ້າຂ້າ
ເອີຍ ນີ້ແຫລະ ໝູ່ຮັກແພງຂອງອາຈານປ່ວຍໜັກ ຢູ່ດຽວນີ້
11:4 ພໍ ພຣະເຢຊູ ໄດ້ຍິນຈັ່ງຊັ້ນເລີຍເວົ້າວ່າ “ ອາການ ປ່ວຍນີ້ບໍ່ເຖິງຕາຍ ພຽງແຕ່
ສະເຫລີມພຣະກຽດພຣະເຈົ້າ ເພື່ອ ພຣະບຸດ ຂອງພຣະເຈົ້າເຮົານີ້ຊິໄດ້ຮັບພຣະ-
ກຽດ ໂດຍເຫດການນີ້”
11:5 ຄື ພຣະເຢຊູ ໄດ້ຮັກແພງສາມພີ່ນ້ອງນີ້ຫລາຍ ຄື ມາທາ ກັບນ້ອງສາວກັບ
ລາຊະໂລ ຜູ້ເປັນນ້ອງຊາຍ
11:6 ບັດນີ້ ພໍ ພຣະເຢຊູ ໄດ້ຍິນວ່າ ລາຊະໂລ ປ່ວຍໜັກ ເພິ່ນກໍໄດ້ຕັດສິນໃຈທີ່ຊິຖ້າ
ອີກສອງມື້ຈັ່ງຊິໄປຫາ
11:7 ແລ້ວຫລັງຈາກສອງມື້ນັ້ນ ເພິ່ນກໍຊວນລູກສິດວ່າ “ໃຫ້ພວກເຮົາພາກັນກັບໄປ
ແຄວ້ນ ຢູດາຍ ອີກເຖີ”
11:8 ພວກລູກສິດເວົ້າກັບເພິ່ນວ່າ “ອາຈານ ເອີຍ ມັນຍັງບໍ່ທັນໂດນປານໃດທີ່ພວກ
ຫົວໜ້າ ຢິວ ໄດ້ຫາໂອກາດເອົາຫີນແກວ່ງໃສ່ອາຈານ ແລ້ວອາຈານຍັງຊິກັບໄປ
ອີກຢູ່ບໍ້”
11:9 ພຣະເຢຊູ ຕອບວ່າ “ແຕ່ລະມື້ນີ້ມີຢູ່ສິບສອງຊົ່ວໂມງບໍ່ແມ່ນບໍ້ ຄັ່ນຜູ້ໃດຍ່າງ
ຢູ່ໃນຄວາມຮຸ່ງແຈ້ງຍາມກາງເວັນນັ້ນ ເຂົາຊິບໍ່ໄດ້ເຕະສະດຸດ ຍ້ອນເຂົາເຫັນ
ຄວາມຮຸ່ງແຈ້ງທາງໂລກນີ້
11:10 ແຕ່ວ່າ ຄັ່ນຜູ້ໃດຍ່າງຢູ່ໃນຄວາມມືດຍາມກາງຄືນ ເຂົາກໍຊິເຕະສະດຸດ ໂລດ
ຍ້ອນຄວາມຮຸ່ງແຈ້ງນັ້ນບໍ່ໄດ້ຢູ່ໃນໂຕເຂົາເລີຍ”
11:11 ຫລັງຈາກເພິ່ນເວົ້າແນວໝູ່ນີ້ແລ້ວ ພຣະເຢຊູ ໄດ້ເວົ້າກັບເຂົາວ່າ “ ລາຊະໂລ
ໝູ່ຂອງພວກເຮົາພວມນອນຫລັບຢູ່ ແຕ່ບໍ່ເປັນຫຍັງ ເຮົາຊິອອກໄປຫາເພື່ອຊິປຸກ
ລາວ ”

11:12 ພວກລູກສິດເລີຍເວົ້າວ່າ ອາຈານເອີຍ ຄັນ ລາວ ນອນຫລັບຢູ່ ລາວ ຄືຊິມີ
ແຮງຂຶ້ນ ແລ້ວຊິໄດ້ເຊົາໄວ
11:13 ແຕ່ວ່າ ພຣະເຢຊູ ເວົ້າເຖິງການຕາຍຂອງ ລາຊະໂລ ແຕ່ລູກສິດເຂົ້າໃຈວ່າ
ເພິ່ນເວົ້າເຖິງການພັກຜ່ອນນອນຫລັບຊື່ໆ
11:14 ບັດນີ້ ພຣະເຢຊູ ເວົ້າຊັດເຈນກັບພວກເຂົາວ່າ " ລາຊະໂລ ຕາຍໄປແລ້ວ"
11:15 "ແລ້ວເຮົາກໍດີໃຈທີ່ວ່າເຮົາບໍ່ໄດ້ຢູ່ນັ້ນນໍາ ຍ້ອນເຫັນແກ່ພວກເຈົ້າ ເພື່ອພວກ
ເຈົ້າຊິໄດ້ມີຄວາມເຊື່ອໝັ້ນໃນໂຕເຮົາ ຈັ່ງໃດກໍຕາມ ໃຫ້ພວກເຮົາອອກໄປຫາ
ລາວ ເຖີ"
11:16 ບັດນີ້ ໂທມາ (ທີ່ຄົນເອີ້ນກັນວ່າ "ແຝດ") ໄດ້ເວົ້າກັບໝູ່ລູກສິດນັ້ນວ່າ "ໃຫ້
ເຮົາໄປກັບອາຈານຂອງເຮົາເຖີ ເພື່ອພວກເຮົາຊິໄດ້ສະລະຊີວິດຕາຍພ້ອມກັບ
ເພິ່ນ"
11:17 ບັດພໍ ພຣະເຢຊູ ໄປຮອດໝູ່ບ້ານ ເບດທາເນຍ ປາກົດວ່າໂຕ ລາຊະໂລ ຢູ່ໃນ
ຖໍ້າ ມ້ຽນສົບ ລາວ ໄດ້ສີ່ມື້ແລ້ວ
11:18 ບັດນີ້ ໝູ່ບ້ານ ເບດທາເນຍ ນັ້ນ ຫ່າງຈາກເມືອງ ເຢຣູຊາເລັມ ປະມານສາມ
ກິໂລ
11:19 ແລ້ວມີພວກ ຊາວຢິວ ຫລາຍຄົນໄດ້ມາໂຮມກັນກັບ ມາທາ ກັບ ມາຣີອາ
ເພື່ອປອບອົກປອບໃຈເຂົາເລື່ອງການຕາຍຂອງນ້ອງຊາຍເຂົາ
11:20 ພໍ ມາທາ ໄດ້ຍິນວ່າ ພຣະເຢຊູ ພວມຊິມາຮອດ ເຂົາໄດ້ອອກໄປຕ້ອນຮັບເພິ່ນ
ແຕ່ສ່ວນ ມາຣີອາ ໄດ້ນັ່ງຢູ່ໃນເຮືອນ
11:21 ບັດນີ້ ມາທາ ເວົ້າກັບ ພຣະເຢຊູ ວ່າ "ຄັນນາຍຜູ້ຂ້າໄດ້ຢູ່ນີ້ ນ້ອງຊາຍຂອງຜູ້-
ຂ້າຄືຊິບໍ່ຕາຍດອກ"
11:22 ແຕ່ວ່າ ຮອດຂະໜາດນີ້ແລ້ວ ຜູ້ຂ້າກໍຍັງຮູ້ຢູ່ວ່າ "ຄູ່ອັນຄູ່ແນວທີ່ນາຍຜູ້ຂ້າ
ວອນຂໍຕໍ່ພຣະເຈົ້າໆ ກໍຊິໃຫ້ນາຍ"
11:23 ພຣະເຢຊູ ບອກກັບນາງວ່າ "ນ້ອງຊາຍຂອງເຈົ້າຊິເປັນຂຶ້ນມາມີຊີວິດຕໍ່ອີກ"
11:24 ມາທາ ເວົ້ານໍາເພິ່ນວ່າ "ເອີ ຜູ້ຂ້າຮູ້ຈັກແລ້ວວ່າ ລາວ ຊິເປັນຂຶ້ນມາ ມີຊີວິດຕໍ່
ອີກໃນມື້ສຸດທ້າຍພູ້ນ"

11:25 ພຣະເຢຊູ ເລີຍບອກນາງວ່າ “ເຮົານີ້ເນາະ ເປັນເຫດໃຫ້ຜູ້ຄົນເປັນຂຶ້ນມາ
ຈາກຕາຍ ກັບເປັນເຫດໃຫ້ມີຊີວິດ ຜູ້ທີ່ຮັບເຊື່ອວາງໃຈໃນເຮົາ ແມ່ນແຕ່ຊິຕາຍ
ແລ້ວກໍຕາມ ຜູ້ນັ້ນຊິມີຊີວິດຕໍ່ໄປອີກ
11:26 ແລ້ວຜູ້ໃດທີ່ມີຊີວິດແລ້ວໄດ້ວາງໃຈໃນເຮົາ ຜູ້ນັ້ນຊິບໍ່ຕາຍເລີຍ ນາງເຊື່ອໝັ້ນ
ໃນຖ້ອຍຄຳນີ້ບໍ່”
11:27 ນາງຕອບເພິ່ນວ່າ “ເອີ ນາຍເຈົ້າຂ້າເອີຍ ຜູ້ຂ້າມີຄວາມເຊື່ອວ່າ ນາຍເປັນ
ພຣະຄຣິດ ພຣະຜູ້ໂຜດ ຜູ້ທີ່ເປັນ ພຣະບຸດ ຂອງພຣະເຈົ້າທີ່ໄດ້ເຂົ້າມາໃນໂລກນັ້ນ
ເນາະ”
11:28 ພໍ ມາທາ ເວົ້າຈັ່ງຊັ້ນແລ້ວ ກໍໄດ້ກັບໄປຄຸຍກັນກັບ ມາຣີອາ ເປັນການສ່ວນໂຕ
ວ່າ “ອາຈານມາຮອດແລ້ວ ແລ້ວພວມເອີ້ນນ້ອງຢູ່”
11:29 ພໍ ມາຣີອາ ໄດ້ຍິນຈັ່ງຊັ້ນ ກໍຟ້າວລຸກຂຶ້ນອອກໄປຫາເພິ່ນ
11:30 ບັດນີ້ ພຣະເຢຊູ ບໍ່ທັນໄດ້ເຂົ້າໄປໃນໝູ່ບ້ານ ແຕ່ຍັງຢູ່ໝ້ອງທີ່ ມາທາ ໄດ້ອອກ
ມາຕ້ອນຮັບເພິ່ນນັ້ນ
11:31 ຕອນນັ້ນ ພວກ ຊາວຢິວ ທີ່ຢູ່ໃນເຮືອນກັບ ມາຣີອາ ພວມປອບອີກປອບໃຈ
ເຂົາຢູ່ ພໍໄດ້ເຫັນ ມາຣີອາ ຟ້າວລຸກຂຶ້ນອອກໄປໄວໆ ກໍພາກັນອອກໄປຕາມເຂົາ
ເວົ້າກັນວ່າ “ ມາຣີອາ ຊິໄປຮ້ອງໄຫ້ຢູ່ຖ້ຳນັ້ນ”
11:32 ແລ້ວບັດພໍ ມາຣີອາ ໄປຮອດໝ້ອງທີ່ ພຣະເຢຊູ ຢືນຢູ່ ພໍເຫັນເພິ່ນແລ້ວກໍ
ຂາບຕີນໄຫວ້ວອນເພິ່ນວ່າ “ນາຍເຈົ້າຂ້າເອີຍ ຄັນນາຍຢູ່ນີ້ ນ້ອງຊາຍຂອງຜູ້ຂ້າຄື
ຊິບໍ່ຕາຍດອກ”
11:33 ບັດນີ້ ພໍ ພຣະເຢຊູ ໄດ້ເຫັນນາງອອກມາພວມຮ້ອງໄຫ້ຢູ່ ພ້ອມກັບພວກ
ຊາວຢິວ ນັ້ນ ພວມຮ້ອງໄຫ້ອອກມານຳກັນ ເພິ່ນກໍຮ້ອງໄຫ້ເປັນທຸກໃນໃຈນຳ
11:34 ພຣະເຢຊູ ເລີຍຖາມວ່າ ໄດ້ເອົາສົບຂອງ ລາວ ໄປມ້ຽນໄວ້ຢູ່ໃສ ພວກເຂົາ
ບອກເພິ່ນວ່າ ນາຍເຈົ້າຂ້າເອີຍ ເຊີນມາເບິ່ງ ຢູ່ພີ້ເດີ້
11:35 ບັດນີ້ ພຣະເຢຊູ ກໍຮ້ອງໄຫ້
11:36 ພວກ ຊາວຢິວ ເລີຍເວົ້າກັນວ່າ “ນີ້ແຫລະ ເພິ່ນໄດ້ຮັກແພງ ລາວ ຫລາຍສ່ຳ
ໃດ”

11:37 ແລ້ວມີຜູ້ລາງຄົນເວົ້າວ່າ “ຄືຜູ້ຊາຍຜູ້ນີ້ທີ່ສາມາດປົວຄົນຕາບອດກັບມາເຫັນ-
ຮຸ່ງໄດ້ ຊິບໍ່ສາມາດຊ່ອຍຄົນຜູ້ນີ້ ບໍ່ໃຫ້ຕາຍໄດ້ບໍ້”
11:38 ບັດນີ້ ພຣະເຢຊູ ກໍຍັງຮ້ອງໄຫ້ໃນໃຈຢູ່ ໄດ້ຂຶ້ນໄປເຖິງອຸບໂມງນັ້ນ ຊຶ່ງເປັນ
ຖ້ຳທີ່ມີແຜ່ນຫີນວາງປິດປາກໄວ້
11:39 ພຣະເຢຊູ ບອກວ່າ “ໃຫ້ຍົກຍ້າຍແຜ່ນຫີນນີ້ອອກໄປເດີ້” ບັດນີ້ ມາທາ
ເອື້ອຍຂອງຜູ້ຕາຍເວົ້າຂຶ້ນວ່າ “ນາຍເຈົ້າຂ້າເອີຍ ຄືຊິມີກິ່ນເໝັນແລ້ວຄືນີ້ ຄື ລາວ
ໄດ້ຕາຍໄປສີ່ມື້ແລ້ວ”
11:40 ພຣະເຢຊູ ບອກນາງນັ້ນວ່າ “ເຮົາບອກເຈົ້າໄວ້ແລ້ວບໍ່ແມ່ນບໍ້ ວ່າຄັນເຈົ້າໄດ້
ເຊື່ອວາງໃຈ ເຈົ້າຊິໄດ້ເຫັນສະຫງ່າລາສີອັນຍິ່ງໃຫຍ່ຂອງພຣະເຈົ້າ”
11:41 ບັດນີ້ພວກເຂົາເລີຍພາກັນຍົກຍ້າຍແຜ່ນຫີນອອກຈາກໝ້ອງທີ່ມ້ຽນສົບຜູ້
ຕາຍໄວ້ນັ້ນ ແລ້ວ ພຣະເຢຊູ ໄດ້ແຫງນໜ້າຂຶ້ນເວົ້າວ່າ “ໂອ້ ພຣະເຈົ້າຜູ້ເປັນພໍ່ເອີຍ
ຜູ້ຂ້າຂອບໃຈພໍ່ ທີ່ພໍ່ໄດ້ຍິນໄດ້ຟັງຜູ້ຂ້າຢູ່ນີ້
11:42 ແລ້ວຜູ້ຂ້າຮູ້ຢູ່ວ່າ ພໍ່ໄດ້ຍິນໄດ້ຟັງຜູ້ຂ້າຢູ່ຕະຫລອດ ແຕ່ຜູ້ຂ້າໄດ້ເວົ້າອອກສຽງ
ຈັ່ງຊີ້ ເພື່ອຄົນທີ່ຢືນຢູ່ອ້ອມນີ້ ຊິໄດ້ເຊື່ອໝັ້ນວ່າພໍ່ໄດ້ໃຊ້ຜູ້ຂ້າມາອີຫລີ”
11:43 ບັດພໍ ພຣະເຢຊູ ເວົ້າແນວນີ້ແລ້ວ ເພິ່ນໄດ້ເວົ້າສຽງດັ່ງຮ້ອງເຂົ້າໄປໃນຖ້ຳວ່າ
ລາຊະໂລ ເອີຍ ໃຫ້ອອກມາເດີ້
11:44 ແລ້ວ ລາຊະໂລ ຜູ້ຕາຍນັ້ນ ກໍອອກມາ ມືກັບຕີນກໍມີຜ້າພັນມັດຢູ່ ໜ້າຕາກໍມີ
ຜ້າພັນໄວ້ຄືກັນ ພຣະເຢຊູ ບອກຄົນຢູ່ຫັ້ນວ່າ “ໃຫ້ແກ້ຜ້າພັນອອກ ແລ້ວປ່ອຍ
ລາວ ໃຫ້ໄປເຖີ”
11:45 ບັດນີ້ ພວກ ຊາວຢິວ ຫລາຍຄົນທີ່ໄດ້ມາຫາ ມາຣີອາ ແລ້ວໄດ້ເຫັນການອັດ-
ສະຈັນແນວທີ່ ພຣະເຢຊູ ໄດ້ເຮັດນັ້ນ ເລີຍເກີດມີຄວາມເຊື່ອວາງໃຈໃນເພິ່ນ
11:46 ແຕ່ວ່າ ສ່ວນຜູ້ລາງຄົນໄດ້ອອກໄປຫາພວກຄະນະ ຟາຣີຊາຍ ແລ້ວໄດ້ເວົ້າ-
ໃຫ້ພວກເຂົາຟັງເຖິງແນວທີ່ ພຣະເຢຊູ ໄດ້ເຮັດ
11:47 ບັດນີ້ ພວກຫົວໜ້າປະໂລຫິດກັບພວກຄະນະ ຟາຣີຊາຍ ກໍໄດ້ຮ່ວມປະຊຸມ
ສະມາຊິກສະພາຂອງພວກຢິວ ປຶກສາກັນວ່າ “ພວກເຮົາຊິເຮັດຈັ່ງໃດດີນໍ້ ຄືຜູ້ນີ້
ເຮັດເຄື່ອງໝາຍອັນສຳຄັນຫລາຍອັນຫລາຍແນວຢູ່ເດ້

11:48 ຖ້າປ່ອຍພວກເຮົາປ່ອຍເຂົາໄວ້ຈັ່ງຊີ້ ຈັກໜ່ອຍໝົດຄູ່ຄົນກໍຊິຫລັ່ງກັນໄປເຊື່ອຖືໃນ
ໂຕເຂົາ ແລ້ວດີບໍ່ດີພວກ ໂຣມ ນັ້ນ ຊິມາຖືເອົາເອົາສະຖານທີ່ ພ້ອມທັງປະເທດ
ຂອງເຮົາໃຫ້ໝົດໄປ"
11:49 ແລ້ວມີຄົນໜຶ່ງໃນພວກເຂົາຊື່ ກາຢະຟາ ຜູ້ນີ້ໃນຖານະທີ່ວ່າເປັນມະຫາປະ-
ໂລຫິດປະຈຳປີນັ້ນ ເຂົາໄດ້ເວົ້າໃນທີ່ປະຊຸມວ່າ "ພວກເຈົ້າບໍ່ຮູ້ຈັກອີຫຍັງເລີຍຊັ້ນ
ບໍ້
11:50 ຄືບໍ່ພິຈາລະນາເບິ່ງແໜ່ ມັນພຽງພໍແລ້ວ ຊິຕ້ອງໃຫ້ຄົນຜູ້ໜຶ່ງຕາຍແທນປະ-
ຊາຊົນເຮົາທັງຫລາຍ ຊິດີກວ່າປ່ອຍໃຫ້ຊາດຂອງເຮົາຈິບຫາຍວາຍວອດໄປໝົດ
ເດ້"
11:51 ເຫດທີ່ ກາຢະຟາ ໄດ້ເວົ້າຈັ່ງຊີ້ ກໍບໍ່ແມ່ນເວົ້າຕາມແນວຄວາມຄຶດຂອງເຂົາ
ເອງ ແຕ່ໃນຖານະວ່າ ລາວ ເປັນມະຫາປະໂລຫິດປະຈຳປີນັ້ນ ພຣະເຈົ້າໄດ້ໃຊ້
ລາວ ໃຫ້ເວົ້າເປັນຄຳທຳນາຍ ເວົ້າເຖິງ ໂຕ ພຣະເຢຊູ ທີ່ວ່າ ເພິ່ນຊິຕາຍເພື່ອກອບ-
ກູ້ຊົນຊາດ ຢິວ ທັງຫລາຍ
11:52 ແລ້ວບໍ່ແມ່ນຕາຍເພື່ອແຕ່ຊົນຊາດ ຢິວ ເທົ່ານັ້ນ ແຕ່ເພື່ອຊິຕຸ້ມໂຮມລູກໆ ຄົນ
ຂອງພຣະເຈົ້າ ທີ່ກະຈັກກະຈາຍອອກໄປຫັ້ນໃຫ້ມາໂຮມກັນ
11:53 ຕັ້ງແຕ່ມື້ນັ້ນມາ ພວກຫົວໜ້າຄົນ ຢິວ ກໍໄດ້ວາງແຜນຊິຈັດການຂ້າ ພຣະເຢ-
ຊູ ໃຫ້ໄດ້
11:54 ຈັ່ງຊັ້ນ ພຣະເຢຊູ ກໍບໍ່ໄດ້ໄປໃສມາໃສຢູ່ໃນພວກຢິວຢ່າງເປີດເຜີຍອີກຕໍ່ໄປ
ແຕ່ໄດ້ອອກໄປຢູ່ຊົນນະບົດ ໝ້ອງຢູ່ໃກ້ຖິ່ນແຫ້ງແລ້ງ ໄປຢູ່ເມືອງນ້ອຍຊື່ວ່າ ເອ-
ຟະຣາອິມ ແລ້ວກໍພັກຢູ່ນັ້ນກັບພວກລູກສິດຂອງເພິ່ນ
11:55 ຕອນນັ້ນໃກ້ຊິຮອດເທດສະການງານລ້ຽງສະຫລອງມື້ພຣະເຈົ້າກູ້ຊາດແລ້ວ
ແລ້ວກໍມີຄົນຫລວງຫລາຍໄດ້ພາກັນມາແຕ່ຊົນນະບົດ ຂຶ້ນໄປເມືອງ ເຢຣູຊາເລັມ
ກ່ອນທີ່ຊິຮອດມື້ງານໃຫຍ່ນັ້ນ ກໍເພື່ອໄປເຮັດການຊຳລະລາງມົນທິນຂອງໂຕເອງ
11:56 ພວກເຂົາໄດ້ຊອກຫາ ພຣະເຢຊູ ແລ້ວກໍຖາມກັນຕອນທີ່ຢືນຢູ່ໃນວິຫານວ່າ
"ເຈົ້າມີຄວາມຄຶດເຫັນຈັ່ງໃດ ວ່າ ພຣະເຢຊູ ຊິໄດ້ມາຮ່ວມງານລ້ຽງສະຫລອງນີ້ຊັ່ນ
ບໍ້"

11:57 ບັດນີ້ພວກຫົວໜ້າປະໂລຫິດ ພ້ອມທັງພວກຄະນະ ຟາຣີຊາຍ ໄດ້ປະກາດ
ຄຳສັ່ງໄວ້ວ່າ ຄັນຜູ້ໃດຮູ້ວ່າ ພຣະເຢຊູ ຢູ່ໜ້ອງໃດ ກໍໃຫ້ແຈ້ງມາ ໂລດ ເພື່ອພວກ
ເຮົາຊິໄດ້ຈັບໂຕເຂົາ

## ໂຢຮັນ ບົດທີ 12

12:1 ຢູ່ມາ ຮອດຫົກມື້ກ່ອນເຖິງງານລ້ຽງສະຫລອງມື້ພຣະເຈົ້າກູ້ຊາດນັ້ນ ພຣະເຢ-
ຊູ ໄດ້ເດີນທາງມາເຖິງໝູ່ບ້ານ ເບດທາເນຍ ໜ້ອງທີ່ ລາຊະໂລ ຢູ່ ແມ່ນຜູ້ທີ່ ພຣະ-
ເຢຊູ ເຮັດໃຫ້ເປັນຂຶ້ນມາຈາກຕາຍນັ້ນ
12:2 ຢູ່ຫັ້ນ ພວກພີ່ນ້ອງເຂົາໄດ້ຈັດລ້ຽງອາຫານຄໍ່າເພື່ອເປັນກຽດໃຫ້ ພຣະເຢຊູ
ມາຫາ ເປັນຜູ້ຮັບໃຊ້ທີ່ໂຕະອາຫານ ສ່ວນ ລາຊະໂລ ໄດ້ນັ່ງກັບໝູ່ ຮ່ວມໂຕະກັບ
ພຣະເຢຊູ ຢູ່ນັ້ນ
12:3 ບັດນີ້ ມາຣີອາ ໄດ້ເອົານໍ້າມັນຫອມປະເພດນາຣະດາບໍລິສຸດ ປະມານເຄິ່ງລິດ
ລາຄາແພງໆ ມາເທລູບໃສ່ຕີນຂອງ ພຣະເຢຊູ ແລ້ວໄດ້ເອົາຜົມຕົນເປັນຜ້າເຊັດ
ກິ່ນຫອມນັ້ນເລີຍເຜີຍແຜ່ໄປທົ່ວເຮືອນ
12:4 ແລ້ວລູກສິດຄົນໜຶ່ງຂອງ ພຣະເຢຊູ ແມ່ນ ຢູດາ ອິດສະກາຣີອົດ (ລູກຊາຍ
ຂອງ ຊີໂມນ ) ແມ່ນຜູ້ທີ່ຊິທໍລະຍົດໃສ່ ພຣະເຢຊູ ນັ້ນ ໄດ້ຕິນາງວ່າ
12:5 ເປັນຫຍັງຄືບໍ່ເອົານໍ້າມັນຫອມນີ້ໄປຂາຍ ເປັນເງິນໄດ້ສາມຮ້ອຍຫລຽນເງິນ
ເດນາຣີອົນ ແລ້ວເອົາເງິນນັ້ນມາແຈກຄົນຍາກຄົນຈົນຊິເປັນຫຍັງ
12:6 ເຂົາເວົ້າຈັ່ງຊີ້ບໍ່ແມ່ນຍ້ອນເຂົາຄຶດເຫັນໃຈຄົນອຶດຄົນຍາກດອກ ແຕ່ຍ້ອນວ່າ
ເຂົາມີໃຈເປັນຄົນຂີ້ລັກຕ່າງຫາກ ແລ້ວມີໜ້າທີ່ເປັນຜູ້ຖືກະເປົາເງິນສ່ວນທັງໝົດ
ຈັ່ງເຄີຍລັກເອົາເງິນຈາກຫັ້ນຢູ່ຢ່າງຕໍ່ເນື່ອງ
12:7 ແຕ່ ພຣະເຢຊູ ເວົ້າວ່າ “ກໍຢ່າເຂົາ ນາງໄດ້ເກັບນໍ້າມັນຫອມນີ້ໄວ້ເພື່ອສະແດງ
ເຖິງມື້ມ້ຽນສົບຂອງເຮົາ
12:8 ສ່ວນຄົນຍາກຄົນຈົນນັ້ນ ຍັງຊິມີຢູ່ກັບພວກເຈົ້າຢູ່ສະເໝີ ແຕ່ສ່ວນເຮົານີ້ ຊິບໍ່ຢູ່
ກັບພວກເຈົ້າສະເໝີ”

12:9 ບັດນີ້ ມີຄົນ ຢິວ ຫລາຍໆ ຄົນ ທີ່ຮູ້ຂ່າວກັນວ່າ ພຣະເຢຊູ ມາຢູ່ບ້ານ ເບດທາ-
ເນຍ ແລ້ວ ພວກເຂົາຈັ່ງພາກັນຫລັ່ງໄຫລໄປຫາ ບໍ່ແມ່ນພຽງແຕ່ຢາກເຫັນ ພຣະ-
ເຢຊູ ແຕ່ວ່າຢາກເຫັນ ລາຊະໂລ ນໍາ ຜູ້ທີ່ ພຣະເຢຊູ ເຮັດໃຫ້ເປັນຄືນມາແຕ່ຕາຍ
ນັ້ນ
12:10 ແຕ່ຝ່າຍພວກຫົວໜ້າປະໂລຫິດນັ້ນ ໄດ້ປຶກສາກັນວາງແຜນຂ້າ ລາຊະໂລ
ນໍາ
12:11 ຍ້ອນວ່າ ລາວ ເປັນເຫດທີ່ພວກຢິວຫລາຍຄົນໄດ້ແຍກອອກໄປຮັບເຊື່ອວາງ-
ໃຈໃນ ພຣະເຢຊູ
12:12 ມື້ຕໍ່ມາ ມີ ຊາວຢິວ ຫລວງຫລາຍໄດ້ມາຮ່ວມງານລ້ຽງສະຫລອງມື້ພຣະເຈົ້າກູ້
ຊາດນັ້ນ ຍ້ອນໄດ້ຍິນວ່າ ພຣະເຢຊູ ຊິມາເມືອງ ເຢຣູຊາເລັມ
12:13 ຈັ່ງໄດ້ພາກັນເອົາສາຂາພ້າວສາຂາຕານ ອອກມາປູຕາມທາງເປັນການ
ຕ້ອນຮັບເພິ່ນ ຈັ່ງພ້ອມກັນຮ້ອງຂຶ້ນວ່າ ໄຊໂຍໆ ຊົງພຣະຈະເລີນເຖີ້ນ ກະສັດ
ຂອງຊົນຊາດ ອິສະຣາເອນ ເຮົາ ຜູ້ເພິ່ນທີ່ສະເດັດມາໃນນາມຂອງອົງພຣະຜູ້ເປັນ-
ເຈົ້າ
12:14 ພຣະເຢຊູ ພໍໄດ້ຮັບລາໜຸ່ມໂຕໜຶ່ງ ໄດ້ຂຶ້ນຂີ່ຫລັງມັນ ຊຶ່ງເປັນໄປຕາມຂໍ້
ພຣະຄໍາ ກ່າວໄວ້ວ່າ
12:15 "ຢ່າຊູ່ຢ້ານເດີ້ ຊາວ ອິສະຣາເອນ ທັງຫລາຍເອີຍ ນີ້ແຫລະ ກະສັດຂອງພວກ
ເຈົ້າພວມຂີ່ລາໜຸ່ມມາແລ້ວ"
12:16 ໃນຕອນແຮກນັ້ນ ລູກສິດຂອງ ພຣະເຢຊູ ບໍ່ເຂົ້າໃຈໃນເຫດການແນວໝູ່ນີ້
ເລີຍ ແຕ່ວ່າບັດຮອດມື້ທີ່ ພຣະເຢຊູ ໄດ້ຮັບສູ່ກຽດຂອງເພິ່ນແລ້ວ ພວກເຂົາຈັ່ງນຶກ
ອອກວ່າ ມີຂໍ້ຂຽນໄວ້ໃນ ພຣະຄໍາ ແນວນັ້ນ ເວົ້າເຖິງ ພຣະເຢຊູ ນີ້ເອງ ທີ່ວ່າຕອນ
ທີ່ຄົນທັງຫລາຍໄດ້ເຮັດແນວໝູ່ນັ້ນ ກໍເປັນການຕ້ອນຮັບເພິ່ນ
12:17 ແລ້ວພວກຄົນທີ່ຢູ່ນໍາ ຕອນທີ່ ພຣະເຢຊູ ໄດ້ເອີ້ນ ລາຊະໂລ ຄືນມາແຕ່ຕາຍ
ອອກຈາກອຸບໂມງນັ້ນ ພວກເຂົາກໍຍັງເປັນພະຍານໃຫ້ຄົນຟັງນໍາ
12:18 ຍ້ອນເຫດນີ້ເນາະ ຈັ່ງມີຄົນຫລວງຫລາຍອອກໄປຕ້ອນຮັບ ພຣະເຢຊູ ກໍ
ຍ້ອນຄໍາພະຍານເຖິງເຄື່ອງໝາຍອັນສໍາຄັນທີ່ເພິ່ນໄດ້ເຮັດນັ້ນ

12:19 ພວກຄະນະ ຟາຣີຊາຍ ກໍເລີຍເວົ້າກັນວ່າ "ພວກໂຕສັງເກດບໍ້ ພວກເຮົາເຮັດ
ຈັ່ງໃດກໍບໍ່ໄດ້ຜົນເລີຍ ນີ້ແຫລະ ຄົນໝົດໂລກໄດ້ຫລັ່ງໄຫລຕາມເຂົາໄປແລ້ວ"
12:20 ບັດນີ້ ໄດ້ມີຊາວເກຣັກຜູ້ລາງຄົນ ທີ່ໄດ້ມາຮ່ວມນະມັດສະການໃນເທດສະ-
ການງານລ້ຽງສະຫລອງນັ້ນ
12:21 ແລ້ວພວກເຂົາໄດ້ມາຫາ ຟີລິບ (ໄທເມືອງ ເບດໄຊດາ ແຄວ້ນ ກາລີເລ ) ແລ້ວ
ໄດ້ຖາມລາວວ່າ "ນາຍເອີຍ ພວກເຮົາຢາກພໍ້ຢາກເຫັນ ພຣະເຢຊູ "
12:22 ບັດນີ້ ຟີລິບ ກໍໄປບອກ ອັນເດອາ ແລ້ວສອງລູກສິດນີ້ ໄດ້ພາກັນໄປບອກ
ພຣະເຢຊູ
12:23 ພຣະເຢຊູ ເລີຍຕອບພວກເຂົາວ່າ ມັນເຖິງຍາມແລ້ວ ທີ່ເຮົາຜູ້ເປັນ ພຣະບຸດ
ຊິໄດ້ຮັບສູ່ກຽດແລ້ວ
12:24 "ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າ ນອກຈາກເມັດເຂົ້າຊິຕົກໄປໃນດິນ
ເປື່ອຍເນົ່າຕາຍໄປ ມັນກໍຊິຢູ່ແຕ່ເມັດດຽວມັນເອງ ແຕ່ຄັ່ນມັນເປື່ອຍເນົ່າຕາຍໄປ
ມັນກໍຊິງອກຂຶ້ນເກີດເປັນໝາກເປັນຜົນຫລາຍເທົ່າ
12:25 ຄື ຜູ້ໃດທີ່ຮັກແພງຊີວິດໂຕເອງ ຊີວິດເຂົາກໍຕ້ອງສູນເສຍໄປ ແຕ່ວ່າຜູ້ໃດທີ່ບໍ່
ໄດ້ຮັກແພງຊີວິດໂຕເອງທາງໂລກນີ້ ກໍຊິຮັກສາຊີວິດເຖິງຕະຫລອດຊົ່ວອັນຕະ-
ຫລອດໄປເປັນນິດ
12:26 ຄັ່ນຜູ້ໃດຊິຮັບໃຊ້ເຮົາ ກໍໃຫ້ຜູ້ນັ້ນຕາມເຮົາມາ ເພື່ອເຮົາຊິຢູ່ໃສ ຜູ້ຮັບໃຊ້ຂອງ
ເຮົາກໍຊິຢູ່ຫັ້ນນໍາ ແລ້ວສ່ວນຜູ້ທີ່ຮັບໃຊ້ເຮົານັ້ນ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ກໍຊິໃຫ້
ກຽດເຂົາຜູ້ນັ້ນນໍາ
12:27 ໂອ້ ເຮົາອຸກອັ່ງໜັກໃຈຫລາຍບັດນີ້ ແລ້ວຊິເວົ້າຈັ່ງໃດດີນໍ້ 'ພຣະເຈົ້າຜູ້ເປັນພໍ່
ເອີຍ ຂໍຊ່ອຍໃຫ້ຜູ້ຂ້າຫລີກເວັ້ນພົ້ນຈາກຊົ່ວໂມງນີ້ທ້ອນ' ແຕ່ຍ້ອນເຫດນີ້ເອງ
ເນາະ ຜູ້ຂ້າໄດ້ມາສູ່ຊົ່ວໂມງນີ້
12:28 ໂອ້ພຣະເຈົ້າ ພໍ່ເອີຍ ໃຫ້ພຣະນາມຂອງພໍ່ໄດ້ຮັບການສັນລະເສີນພຣະກຽດ
ເດີ້" ຫວ່າງນັ້ນໄດ້ມີສຽງອັນດັງກ້ອງລົງມາຈາກເທິງຟ້າວ່າ "ເຮົາໄດ້ຮັບການສັນ-
ລະເສີນພຣະກຽດແລ້ວ ແລ້ວກໍຊິໄດ້ຮັບຕໍ່ອີກ"

12:29 ບັດນີ້ ພວກປະຊາຊົນຜູ້ລາງຄົນທີ່ໄດ້ຍິນສຽງນັ້ນກໍວ່າ “ຟ້າດັງຟ້າຮ້ອງຊື່ໆ”
ແລ້ວອີກຜູ້ລາງຄົນກໍເວົ້າວ່າ “ໄດ້ມີເທວະທູດມາເວົ້າກັບເພິ່ນແລ້ວ”
12:30 ພຣະເຢຊູ ເລີຍຕອບພວກເຂົາວ່າ “ສຽງເວົ້ານັ້ນ ກໍບໍ່ໄດ້ເວົ້າມາເພື່ອຜົນປະ-
ໂຫຍດເຮົາ ແຕ່ເພື່ອພວກເຈົ້າ
12:31 ໄດ້ຮອດຍາມແລ້ວດຽວນີ້ ທີ່ໂລກນີ້ຊິຕ້ອງເຂົ້າສູ່ການຕັດສິນລົງໂທດ ແລ້ວ
ເທບຜູ້ຄອບຄອງໂລກນີ້ ຊິໂດນໄລ່ອອກໄປດຽວນີ້
12:32 ແລ້ວຄັ້ນເຮົາຊິຖືກຍົກຂຶ້ນໄວ້ຈາກພື້ນແຜ່ນດິນ ເຮົາຊິໄດ້ເຊີນຊວນຊາວໂລກ
ທັງຫລາຍໃຫ້ມາເຖິງເຮົາ”
12:33 ພຣະເຢຊູ ໄດ້ເວົ້າຈັ່ງຊີ້ ເພື່ອເປັນການເວົ້າເຖິງວ່າເພິ່ນຊິຕາຍວິທີໃດ
12:34 ແລ້ວພວກຄົນທັງຫລາຍໄດ້ຖາມ ພຣະເຢຊູ ອີກວ່າ “ພວກເຮົາໄດ້ຍິນຈາກ
ບົດບັນຍັດວ່າ ພຣະຄຣິດ ພຣະຜູ້ໂຜດນັ້ນ ເພິ່ນຊິມີຊີວິດດຳລົງຢູ່ຕະຫລອດ ແລ້ວ
ເປັນຫຍັງເຈົ້າຈັ່ງເວົ້າວ່າບຸດມະນຸດຊິຖືກຍົກຂຶ້ນໄວ້ຈັ່ງຊັ້ນ ແລ້ວບຸດມະນຸດຜູ້ທີ່
ເຈົ້າເວົ້ານີ້ ເພິ່ນແມ່ນໃຜຊັ້ນ”
12:35 ພຣະເຢຊູ ບອກພວກເຂົາວ່າ “ຄວາມສະຫວ່າງຊິມີຢູ່ນຳພວກເຈົ້າອີກໜ່ອຍ
ໜຶ່ງ ຈັ່ງຊັ້ນ ໃຫ້ໃຊ້ຊີວິດໃນຄວາມສະຫວ່າງໃນຍາມທີ່ມີຢູ່ ເພື່ອຄວາມມືດຊິບໍ່ໄດ້
ເຂົ້າມາຄອບງຳເຈົ້າໄວ້ ຄື ຄົນທີ່ໃຊ້ຊີວິດໄປໃນຄວາມມືດ ກໍບໍ່ຮູ້ວ່າໂຕເອງພວມຊິ
ໄປໃສມາໃສ
12:36 ບັດຍາມພວກເຈົ້າມີຄວາມສະຫວ່າງຢູ່ນຳ ກໍໃຫ້ເຊື່ອທາກໍ່ໃນຄວາມສະ-
ຫວ່າງນັ້ນເດີ້ ເພື່ອພວກເຈົ້າຊິໄດ້ເປັນລູກໆ ຂອງຄວາມສະຫວ່າງນັ້ນ” ພໍ ພຣະ-
ເຢຊູ ໄດ້ເວົ້າແລ້ວ ຈັ່ງໄດ້ລີ້ຊ່ອນໂຕຈາກພວກເຂົາໄປ
12:37 ຄືວ່າທັງໆ ທີ່ ພຣະເຢຊູ ໄດ້ເຮັດເຄື່ອງໝາຍອັນສຳຄັນຫລາຍອັນຫລາຍແນວ
ຕໍ່ໜ້າຕໍ່ຕາພວກເຂົາທັງຫລາຍ ເຂົາກໍຍັງບໍ່ຮັບເຊື່ອໃນເພິ່ນເລີຍ
12:38 ເພື່ອເປັນໄປຕາມ ພຣະຄຳ ເອຊາຢາ ຜູ້ເປັນປາກເປັນສຽງຂອງພຣະເຈົ້າທີ່
ໄດ້ ກ່າວໄວ້ວ່າ “ໂອ້ພຣະເຈົ້າເອີຍ ແມ່ນໃຜເຊື່ອໃນຂ່າວທີ່ພວກຜູ້ຂ້າປະກາດ ກັບ
ວ່າແມ່ນໃຜທີ່ໄດ້ຮັບການເປີດເຜີຍເຖິງລິດອຳນາດຂອງເພິ່ນ”

12:39 ຈັ່ງຊັ້ນ ທີ່ຄົນພວກນີ້ບໍ່ມີຄວາມເຊື່ອ ກໍເປັນໄປຕາມຄຳທີ່ ເອຊາຢາ ນັ້ນໄດ້
ກ່າວໄວ້ອີກຕອນໜຶ່ງວ່າ
12:40 "ພຣະເຈົ້າໄດ້ເຮັດໃຫ້ຕາຂອງເຂົາບອດໄປ ແລ້ວໃຫ້ໃຈຂອງເຂົາແຂງກະ-
ດ້າງໄປ ບໍ່ຊັ້ນພວກເຂົາ ອາດ ຊິເຫັນຈິງກັບຕາ ຮູ້ແຈ້ງກັບໃຈ ແລ້ວຫັນກັບມາຫາ
ເຮົາ ເພື່ອເຮົາຊິໄດ້ປົວພວກເຂົາໃຫ້ຫາຍເປັນດີ"
12:41 ຄຳແນວໝູ່ນີ້ ເອຊາຢາ ໄດ້ກ່າວໄວ້ຍາມທີ່ ລາວ ເຫັນສະຫງ່າລາສີອັນຮຸ່ງ-
ເຮືອງຂອງພຣະເຈົ້າ ຈັ່ງໄດ້ກ່າວເຖິງເພິ່ນ
12:42 ຈັ່ງໃດກໍຕາມ ກໍຍັງມີຜູ້ຫລັກຜູ້ໃຫຍ່ຂອງພວກຢິວ ຫລາຍຄົນໄດ້ຮັບເຊື່ອ
ວາງໃຈໃນ ພຣະເຢຊູ ແຕ່ພວກເຂົາບໍ່ກ່າຮັບປາກຢ່າງເປີດເຜີຍ ຢ້ານຊິຖືກຕັດ
ອອກຈາກສະໂມສອນສາລາທຳນຳ *(ໃຫ້ເບິ່ງ ໂຢຮັນ 9:22)*
12:43 ຄືພວກເຂົາມັກຄຳຊົມເຊີຍຈາກຄົນ ຫລາຍກວ່າຄຳຊົມເຊີຍຈາກພຣະເຈົ້າ
12:44 ບັດນີ້ ພຣະເຢຊູ ໄດ້ຮ້ອງຂຶ້ນອອກສຽງດັ່ງວ່າ "ຜູ້ທີ່ໄດ້ຮັບເຊື່ອໃນເຮົາ ກໍບໍ່
ໄດ້ຮັບເຊື່ອວາງໃຈໃນເຮົາຜູ້ດຽວ ແຕ່ໄດ້ຮັບເຊື່ອວາງໃຈໃນພຣະເຈົ້ານຳ ຜູ້ເພິ່ນທີ່
ໄດ້ໃຊ້ເຮົາມາ
12:45 ແລ້ວຜູ້ທີ່ເຫັນເຮົານີ້ ກໍໄດ້ເຫັນພຣະເຈົ້າ ຜູ້ເພິ່ນທີ່ໄດ້ໃຊ້ເຮົາມາ
12:46 ເຮົາເປັນແສງສະຫວ່າງທີ່ສ່ອງເຂົ້າມາໃນໂລກ ເພື່ອຜູ້ໃດກໍຕາມທີ່ຮັບເຊື່ອ
ວາງໃຈໃນເຮົາ ຊິບໍ່ໄດ້ຢູ່ໃນຄວາມມືດອີກຕໍ່ໄປ
12:47 ແລ້ວຄັນຜູ້ໃດທີ່ໄດ້ຍິນຖ້ອຍຄຳຂອງເຮົາແລ້ວນີ້ ແຕ່ບໍ່ຮັບເຊື່ອ ເຮົາເອງຊິບໍ່
ຕັດສິນເຂົາ ຍ້ອນວ່າເຮົາບໍ່ໄດ້ມາເພື່ອຕັດສິນຊາວໂລກ ແຕ່ມາເພື່ອໃຫ້ຊາວໂລກ
ມີການລອດພົ້ນ
12:48 ສ່ວນຜູ້ທີ່ປະຕິເສດເຮົາ ກັບບໍ່ຍອມຮັບເອົາຖ້ອຍຄຳຂອງເຮົາ ເຂົາກໍຊິມີແນວ
ໜຶ່ງທີ່ຊິຕັດສິນລົງໂທດເຂົາຢູ່ແລ້ວ ແມ່ນຖ້ອຍຄຳທີ່ເຮົາເວົ້ານີ້ເນາະ ຊິໄດ້ຕັດສິນ
ລົງໂທດເຂົາໃນມື້ສຸດທ້າຍ
12:49 ຄືເຮົາບໍ່ໄດ້ເວົ້າຕາມສິດຂອງເຮົາເອງດອກ ແຕ່ພຣະເຈົ້າຜູ້ເປັນພໍ່ຜູ້ເພິ່ນທີ່ໃຊ້
ເຮົາມານີ້ ເພິ່ນໄດ້ສັ່ງເຮົາໄວ້ວ່າ ເຮົາຄວນຊິເວົ້າຄວນຊິຈາຈັ່ງໃດແໜ່

12:50 ແລ້ວເຮົາຮູ້ຈັກວ່າຄຳສັ່ງຂອງເພິ່ນນຳໄປສູ່ຊີວິດອັນຕະຫລອດໄປເປັນນິດ
ຈັ່ງຊັ້ນຄຳທີ່ເຮົາເວົ້ານີ້ຈັ່ງໄດ້ເປັນຕາມຄຳທີ່ພຣະເຈົ້າຜູ້ເປັນພໍ່ ໄດ້ສັ່ງໃຫ້ເຮົາເວົ້າ”

## ໂຢຮັນ ບົດທີ 13

13:1 ບັດນີ້ ກ່ອນລົງກິນລ້ຽງສະຫລອງມື້ພຣະເຈົ້າກູ້ຊາດນັ້ນ ພໍ ພຣະເຢຊູ ຮູ້ວ່າຊິ
ຮອດເວລາແລ້ວທີ່ເພິ່ນຊິອອກຈາກໂລກກັບໄປຫາພຣະເຈົ້າຜູ້ເປັນພໍ່ ຊຶ່ງເພິ່ນໄດ້
ຮັກແພງຄົນຂອງເພິ່ນຜູ້ຢູ່ໃນໂລກນີ້ ເພິ່ນໄດ້ຮັກແພງເຂົາຈົນຮອດຍາມສຸດທ້າຍ
ເລີຍ
13:2 ພໍກິນລ້ຽງສະຫລອງກັນແລ້ວ ຊຶ່ງກ່ອນໜ້ານັ້ນ ພະຍາມານ ໄດ້ເອົາຄວາມ
ຄຶດສຽບໄວ້ໃນໃຈຂອງ ຢູດາ ອິດສະກາຣີອົດ ແລ້ວ ຜູ້ເປັນລູກຊາຍຂອງ ຊີໂມນ
ນັ້ນ ໃຫ້ເຂົາມີໃຈຢາກທໍລະຍົດໃສ່ ພຣະເຢຊູ
13:3 ສ່ວນ ພຣະເຢຊູ ເພິ່ນຮູ້ຈັກວ່າ ພຣະເຈົ້າໄດ້ມອບສິດຄູ່ອັນຄູ່ແນວໄວ້ໃນມື
ຂອງເພິ່ນຢູ່ແລ້ວ ກັບຮູ້ຢູ່ວ່າໂຕເພິ່ນເອງໄດ້ມາຈາກພຣະເຈົ້າ ແລ້ວຊິໄດ້ກັບໄປ
ຫາພຣະເຈົ້າອີກ
13:4 ກິນແລ້ວ ພຣະເຢຊູ ກໍເລີຍລຸກໄປຖອດເສື້ອຄຸມຂອງເພິ່ນອອກວາງໄວ້ ແລ້ວ
ເອົາຜ້າເຊັດໂຕມາຄາດແອວໄວ້
13:5 ຫລັງນັ້ນມາ ເພິ່ນໄດ້ເທນໍ້າໃສ່ຊາມ ແລ້ວຈັ່ງລ້າງຕີນໃຫ້ລູກສິດ ແລ້ວກໍເອົາ
ຜ້າທີ່ຄາດແອວນັ້ນເຊັດຕີນໃຫ້ພວກເຂົານຳ
13:6 ພໍມາຮອດ ເປໂຕ ເປໂຕ ກໍຖາມວ່າ “ນາຍຜູ້ຂ້າຊິລ້າງຕີນໃຫ້ຜູ້ຂ້າຊັ່ນບໍ້”
13:7 ພຣະເຢຊູ ຕອບວ່າ “ເຈົ້າບໍ່ເຂົ້າໃຈດອກ ວ່າເຮົາພວມເຮັດຫຍັງຢູ່ດຽວນີ້ ແຕ່
ຫລັງຈາກນີ້ໄປເຈົ້າຄືຊິໄດ້ຮູ້ຈັກ”
13:8 ເປໂຕ ເວົ້າວ່າ “ນາຍຜູ້ຂ້າຊິບໍ່ໄດ້ລ້າງຕີນຜູ້ຂ້າຈັກເທື່ອເລີຍ” ພຣະເຢຊູ
ບອກວ່າ “ຄັ່ນເຮົາບໍ່ລ້າງໃຫ້ ເຈົ້າບໍ່ມີສິດມີສ່ວນຮ່ວມກັບເຮົາເລີຍ”
13:9 ຊີໂມນເປໂຕ ເລີຍຂໍຮ້ອງວ່າ “ນາຍຜູ້ຂ້າເອີຍ ຂໍຢ່າລ້າງຕີນຂອງຜູ້ຂ້າແຕ່ແນວ
ດຽວ ໃຫ້ລ້າງມືລ້າງຫົວໃຫ້ຜູ້ຂ້ານຳແໜ່”
13:10 ພຣະເຢຊູ ເລີຍບອກເຂົາຕໍ່ອີກວ່າ “ຜູ້ທີ່ອາບນໍ້າກໍສະອາດແລ້ວ ຕ້ອງການທີ່
ຊິລ້າງໃຫ້ແຕ່ຕີນເທົ່ານັ້ນ ຄືພວກເຈົ້າສະອາດໝົດແລ້ວ ແຕ່ບໍ່ແມ່ນຄູ່ຄົນ”

13:11 ຄື ພຣະເຢຊູ ຮູ້ວ່າ ໃຜຊິທໍລະຍົດໃສ່ເພິ່ນ ເພິ່ນຈັ່ງເວົ້າວ່າ “ພວກເຈົ້າສະອາດ
ໝົດແລ້ວ ແຕ່ບໍ່ແມ່ນຄູ່ຄົນ”
13:12 ບັດນີ້ ພໍ ພຣະເຢຊູ ໄດ້ລ້າງຕີນໃຫ້ລູກສິດໝົດແລ້ວ ເພິ່ນໄດ້ໃສ່ເສື້ອຄຸມຂອງ
ເພິ່ນອີກ ແລ້ວກັບໄປນັ່ງລົງຄືເກົ່າ ແລ້ວຈັ່ງຖາມລູກສິດວ່າ “ພວກເຈົ້າພໍເຂົ້າໃຈບໍ້
ແນວທີ່ເຮົາເຮັດໃຫ້ພວກເຈົ້ານີ້
13:13 ຄື ພວກເຈົ້າເອີ້ນເຮົາວ່າ ອາຈານກັບວ່າ ນາຍຊີວິດ ທີ່ໄດ້ເອີ້ນຈັ່ງຊີ້ກໍດີແລ້ວ
ຍ້ອນວ່າເຮົາແມ່ນຢູ່ແລ້ວ
13:14 ຄັ່ນວ່າ ຂະໜາດເຮົາຜູ້ເປັນນາຍຊີວິດ ກັບເປັນອາຈານຂອງພວກເຈົ້າ ຍັງ
ລ້າງຕີນໃຫ້ພວກເຈົ້າຜູ້ເປັນລູກສິດ ພວກເຈົ້າຄວນຊິລ້າງຕີນໃຫ້ກັນແລະກັນນໍາ
ເດີ້
13:15 ຄືເຮົາໄດ້ເຮັດໄວ້ເປັນໂຕຢ່າງໃຫ້ພວກເຈົ້າ ເພື່ອໃຫ້ພວກເຈົ້າເຮັດຕາມຢ່າງທີ່
ເຮົາໄດ້ເຮັດໃຫ້ພວກເຈົ້າແລ້ວນັ້ນ
13:16 ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຄົນໃຊ້ຊິບໍ່ໄດ້ເປັນໃຫຍ່ລື່ນນາຍໂຕ
ເອງດອກ ແລ້ວຜູ້ເປັນທູດ ຊິບໍ່ເປັນໃຫຍ່ກວ່າຜູ້ທີ່ໃຊ້ເຂົາມາ
13:17 ຄັ່ນພວກເຈົ້າເຂົ້າໃຈໃນເລື່ອງນີ້ແລ້ວ ເຈົ້າກໍຊິໄດ້ພົບເປັນສຸກຄັ່ນໄດ້ເຮັດ
ຕາມ
13:18 ທີ່ເຮົາເວົ້ານີ້ ກໍບໍ່ໄດ້ໝາຍເຖິງໝົດຄູ່ຄົນໃນພວກເຈົ້າດອກ ຄືເຮົາຮູ້ຢູ່ແລ້ວຜູ້ທີ່
ເຮົາໄດ້ເລືອກໄວ້ນັ້ນ ເພື່ອຊິໄດ້ເປັນໄປຕາມຂໍ້ທີ່ ພຣະຄໍາ ກ່າວໄວ້ວ່າ ‘ຜູ້ທີ່ກິນເຂົ້າ
ນໍາເຮົາໄດ້ຍົກສົ້ນຕີນໃສ່ເຮົາ’
13:19 ບັດນີ້ ເຮົາບອກພວກເຈົ້າໄວ້ກ່ອນມັນຊິເກີດຂຶ້ນ ເພື່ອວ່າພໍເກີດຂຶ້ນແລ້ວ
ພວກເຈົ້າຊິໄດ້ມີຄວາມເຊື່ອໝັ້ນວ່າ ເຮົາແມ່ນຜູ້ນັ້ນອີຫລີທີ່ພຣະເຈົ້າໃຊ້ມາ
13:20 ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຜູ້ທີ່ຕ້ອນຮັບຄົນທີ່ເຮົາໃຊ້ໄປ ກໍສໍ່າ
ຕ້ອນຮັບເຮົາເອງ ແລ້ວຜູ້ທີ່ຕ້ອນຮັບເຮົານັ້ນ ກໍສໍ່າກັບຕ້ອນຮັບພຣະເຈົ້າ ຜູ້ເພິ່ນທີ່
ໃຊ້ເຮົາມານີ້”

13:21 ຫລັງຈາກ ພຣະເຢຊູ ໄດ້ເວົ້າຈັ່ງຊີ້ແລ້ວ ເພິ່ນກໍອຸກອັ່ງໜັກໃຈຫລາຍ ຈັ່ງເວົ້າ
ວ່າ “ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ຄືມີຄົນໜຶ່ງໃນພວກເຈົ້າທີ່ຊິທໍລະຍົດໃສ່
ເຮົາ”
13:22 ບັດນີ້ ພວກລູກສິດພາກັນເບິ່ງໜ້າກັນເປັນຕາງຶດວ່າ ທີ່ ພຣະເຢຊູ ເວົ້ານັ້ນ ໝ
າຍເຖິງໃຜ
13:23 ບັດນີ້ ມີລູກສິດຜູ້ໜຶ່ງ ທີ່ນັ່ງໂຕະໃກ້ ພຣະເຢຊູ ແມ່ນລູກສິດຜູ້ທີ່ ພຣະເຢຊູ
ຮັກແພງນັ້ນ
13:24 ຊີໂມນເປໂຕ ເລີຍເຮັດໄມ້ເຮັດມືຍິກໜ້າ ສົ່ງສັນຍານໃຫ້ລູກສິດຜູ້ນັ້ນຖາມ
ພຣະເຢຊູ ເຖິງຜູ້ທີ່ເພິ່ນເວົ້ານັ້ນ
13:25 ລູກສິດນັ້ນ ໄດ້ເອນໂຕໄປຖາມ ພຣະເຢຊູ ວ່າ ນາຍຜູ້ຂ້າເອີຍ “ແມ່ນຜູ້ໃດແໜ່
ທີ່ຊິທໍລະຍົດໃສ່ນາຍ”
13:26 ພຣະເຢຊູ ຕອບວ່າ “ແມ່ນຜູ້ທີ່ເຮົາຊິໃຫ້ເຂົ້າຈີ່ຫລັງຈາກເຮົາຈ່ຳລົງນັ້ນເນາະ”
ພໍເວົ້າແລ້ວ ພຣະເຢຊູ ກໍຫຍິບເຂົ້າຈີ່ຈ່ຳລົງ ແລ້ວກໍຍື່ນໃຫ້ ຢູດາ ອິດສະກາຣິອົດ
ລູກຊາຍຂອງ ຊີໂມນ ນັ້ນ
13:27 ຫລັງຈາກຮັບເອົາເຂົ້າຈີ່ນັ້ນແລ້ວ ພະຍາມານ ຊາຕານໄດ້ເຂົ້າໃນໂຕເຂົາ
ແລ້ວ ພຣະເຢຊູ ເລີຍບອກເຂົາວ່າ “ແນວທີ່ເຈົ້າຊິເຮັດນັ້ນ ກໍເຮັດໃຫ້ມັນໄວໆ ເດີ້”
13:28 ສ່ວນພວກລູກສິດທີ່ຮ່ວມໂຕະນຳກັນນັ້ນ ບໍ່ມີໃຜຮູ້ເຖິງແນວທີ່ ພຣະເຢຊູ ເວົ້າ
ກັບ ຢູດາ
13:29 ຜູ້ລາງຄົນຄຶດວ່າ ຍ້ອນ ຢູດາ ເປັນຜູ້ຖືກະເປົາເງິນນັ້ນ ພຣະເຢຊູ ບອກໃຫ້
ເຂົາໄປຊື້ຂອງຈຳເປັນໃນການລ້ຽງສະຫລອງ ຫລືວ່າຊິໃຫ້ເອົາອີຫຍັງໄປບໍລິຈາກ
ໃຫ້ຄົນທຸກຄົນຍາກ
13:30 ພໍ ຢູດາ ໄດ້ຮັບເອົາເຂົ້າຈີ່ນັ້ນແລ້ວ ເຂົາກໍອອກໄປເລີຍ ຕອນນັ້ນກໍຄ່ຳແລ້ວ
13:31 ພໍ ຢູດາ ອອກໄປແລ້ວ ພຣະເຢຊູ ໄດ້ເວົ້າວ່າ “ບັດນີ້ ໄດ້ຮອດຍາມມັນແລ້ວ
ທີ່ເຮົາຜູ້ເປັນບຸດມະນຸດ ຊິໄດ້ເຂົ້າສູ່ສະຫງ່າລາສີອັນຮຸ່ງເຮືອງ ແລ້ວພຣະເຈົ້າຊິ
ໄດ້ຮັບພຣະກຽດທາງເຮົານຳ

13:32 ຈັ່ງຊັ້ນ ຄັນວ່າພຣະເຈົ້າຊິໄດ້ຮັບພຣະກຽດທາງເຮົາຜູ້ເປັນບຸດມະນຸດ ພຣະ-
ເຈົ້າກໍຊິໃຫ້ບຸດມະນຸດເຮົາຮັບພຣະກຽດໃນໂຕເຮົາເອງນຳ ແລ້ວເພິ່ນກໍຊິເລີ່ມເຮັດ
ແນວນັ້ນໃຫ້ເຮົາຢູ່ທັນທີເລີຍ
13:33 ລູກສິດເອີຍ ເວລາທີ່ເຮົາຊິຢູ່ກັບພວກເຈົ້າກໍຍັງເຫລືອນ້ອຍ ແລ້ວພວກເຈົ້າຊິ
ຊອກຫາເຮົາ ຄືກັນກັບທີ່ເຮົາໄດ້ບອກພວກຢິວນັ້ນແລ້ວວ່າ 'ໝ້ອງທີ່ເຮົາຊິໄປນັ້ນ
ພວກເຈົ້າໄປບໍ່ໄດ້' ບັດນີ້ ເຮົາກໍເວົ້າແນວດຽວກັນກັບພວກເຈົ້າ
13:34 ແຕ່ວ່າເຮົາຊິໃຫ້ຫລັກຄຳສັ່ງໃໝ່ໄວ້ໃຫ້ກັບພວກເຈົ້າວ່າຈັ່ງຊີ້ ຄືໃຫ້ພວກເຈົ້າ
ຮັກແພງກັນແລະກັນເດີ້ ຄືທີ່ເຮົາເຄີຍຮັກແພງຕໍ່ພວກເຈົ້າຈັ່ງໃດ ກໍໃຫ້ພວກເຈົ້າ
ຮັກແພງກັນຈັ່ງຊັ້ນ
13:35 ໂດຍເຫດນີ້ເນາະ ຄູ່ຄົນກໍຊິຮູ້ກັນວ່າ ພວກເຈົ້າເປັນລູກສິດຂອງເຮົາ ຄັນວ່າ
ພວກເຈົ້າສະແດງຄວາມຮັກແບບຂອງພຣະເຈົ້າຕໍ່ກັນແລະກັນ"
13:36 ຊີໂມນເປໂຕ ຖາມ ພຣະເຢຊູ ວ່າ "ນາຍຜູ້ຂ້າຊິໄປໃສ" ພຣະເຢຊູ ຕອບວ່າ
"ໝ້ອງທີ່ເຮົາຊິໄປນັ້ນ ເຈົ້າຊິຕາມເຮົາໄປທັນທີບໍ່ໄດ້ດອກ ແຕ່ວ່າເຈົ້າຊິຕາມເຮົາ
ໄປຕອນຫລັງ"
13:37 ບັດນີ້ ເປໂຕ ຖາມ ພຣະເຢຊູ ວ່າ "ນາຍຜູ້ຂ້າເອີຍ ເປັນຫຍັງຜູ້ຂ້າຈັ່ງຊິໄປນຳບໍ່
ໄດ້ ຄືຜູ້ຂ້າພ້ອມທີ່ຊິວາງຊີວິດລົງ ໂດຍເຫັນແກ່ນາຍຜູ້ຂ້າຢູ່ແລ້ວ"
13:38 ພຣະເຢຊູ ຕອບເຂົາວ່າ "ທີ່ເຈົ້າວ່າຊິວາງຊີວິດລົງເພື່ອເຮົານັ້ນແມ່ນຢູ່ບໍ້ ເຮົາ
ຊິບອກເຈົ້າຕາມຊື່ນີ້ເນາະ ວ່າກ່ອນໄກ່ຊິຂັນນັ້ນ ເຈົ້າຊິປະຕິເສດວ່າ ບໍ່ຮູ້ຈັກກັບ
ເຮົາສາມເທື່ອ"

## ໂຢຮັນ ບົດທີ 14

14:1 ພຣະເຢຊູ ເລີຍບອກວ່າ "ຢ່າສູ່ອຸກອັ່ງໜັກໃຈຫລາຍເດີ້ ເຈົ້າເຊື່ອນຳພຣະເຈົ້າ
ແລ້ວ ກໍໃຫ້ເຊື່ອວາງໃຈໃນເຮົານຳ
14:2 ຄືໃນພຣະນິເວດຂອງພຣະເຈົ້າຜູ້ເປັນພໍ່ເຮົາ ມີວັງໃຫ້ຢູ່ຫລາຍວັງ ຄັນບໍ່ແມ່ນ
ເຮົາຄືຊິໄດ້ບອກເຈົ້າແລ້ວ ແລ້ວບັດນີ້ເຮົາຊິໄປຈັດກຽມໝ້ອງພັກອາໄສໄວ້ໃຫ້ເຈົ້າ
14:3 ແລ້ວຄັນເຮົາຊິໄປຈັດກຽມໝ້ອງພັກອາໄສໄວ້ໃຫ້ເຈົ້າ ເຮົາກໍຊິກັບມາຮັບເອົາ
ເຈົ້າໃຫ້ໄປຢູ່ນຳເຮົາ ເພື່ອວ່າເຮົາຢູ່ໃສເຈົ້າກໍຊິຢູ່ນັ້ນນຳ

14:4 ແລ້ວໜ້ອງທີ່ເຮົາຊິໄປຢູ່ນັ້ນ ພວກເຈົ້າກໍຮູ້ຢູ່ແລ້ວ ແລ້ວຮູ້ຈັກທາງນັ້ນນໍາ”
14:5 ບັດນີ້ ໂທມາ ຖາມ ພຣະເຢຊູ ວ່າ “ນາຍຜູ້ຂ້າເອີຍ ພວກຜູ້ຂ້າບໍ່ຮູ້ຈັກວ່ານາຍຊິ
ໄປຢູ່ໃສ ຊິຮູ້ຈັກທາງໄດ້ແນວໃດ”
14:6 ພຣະເຢຊູ ເລີຍບອກເຂົາວ່າ “ເຮົານີ້ເນາະຄືທາງນັ້ນ ເປັນຫລັກຄວາມຈິງ ກັບ
ເປັນແຫລ່ງຊີວິດ ບໍ່ມີໃຜໄປຫາໄປຮອດພຣະເຈົ້າຜູ້ເປັນພໍ່ໄດ້ເລີຍ ນອກຈາກມາ
ທາງເຮົາ
14:7 ຄັນເຈົ້າໄດ້ຮູ້ຈັກເຮົາອີຫລີ ເຈົ້າຊິຕ້ອງຮູ້ຈັກພຣະເຈົ້າຜູ້ເປັນພໍ່ຂອງເຮົານໍາ
ແລ້ວແຕ່ນີ້ໄປ ເຈົ້າຮູ້ຈັກເພິ່ນ ກັບເຫັນເພິ່ນຢູ່ແລ້ວ”
14:8 ບັດນີ້ ຟີລິບ ບອກ ພຣະເຢຊູ ວ່າ “ນາຍຜູ້ຂ້າເອີຍ ຂໍໃຫ້ພວກຜູ້ຂ້າເຫັນພຣະ-
ເຈົ້າຜູ້ເປັນພໍ່ແໜ່ ພວກຜູ້ຂ້າກໍຊິພຽງພໍແລ້ວ”
14:9 ພຣະເຢຊູ ເລີຍເວົ້າວ່າ “ເຮົາຢູ່ກັບເຈົ້າມາແຕ່ດົນນານ ແລ້ວເຈົ້າຍັງບໍ່ຮູ້ຈັກ
ເຮົາຢູ່ບໍ້ ຟີລິບ ເອີຍ ຄືຜູ້ທີ່ເຫັນເຮົາກໍໄດ້ເຫັນພຣະເຈົ້າຢູ່ແລ້ວ ແລ້ວເປັນຫຍັງເຈົ້າ
ຈັ່ງເວົ້າວ່າ ‘ຂໍໃຫ້ເຫັນພຣະເຈົ້າຜູ້ເປັນພໍ່’ ຈັ່ງຊັ່ນ
14:10 ເຈົ້າບໍ່ເຊື່ອບໍ້ ວ່າເຮົາເປັນອັນໜຶ່ງອັນດຽວກັນກັບພຣະເຈົ້າຜູ້ເປັນພໍ່ນັ້ນ ຄື
ຖ້ອຍຄໍາທີ່ເຮົາເວົ້ານີ້ ບໍ່ແມ່ນເຮົາເວົ້າເອົາເອງ ແຕ່ວ່າພຣະເຈົ້າຜູ້ເປັນພໍ່ ຜູ້ເພິ່ນທີ່
ສະຖິດຢູ່ໃນເຮົາ ໄດ້ເຮັດການງານຂອງເພິ່ນ
14:11 ເຊື່ອເຮົາໄດ້ ໂລດ ວ່າເຮົາເປັນອັນໜຶ່ງອັນດຽວກັນກັບພຣະເຈົ້າຜູ້ເປັນພໍ່
ແລ້ວວ່າເພິ່ນເປັນອັນໜຶ່ງອັນດຽວກັນກັບເຮົາ ຫລືບໍ່ຊັ້ນ ໃຫ້ເຊື່ອໃນເຮົາຍ້ອນເຫັນ
ແກ່ການງານແນວທີ່ເຮົາໄດ້ເຮັດນີ້
14:12 ຄືເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າຜູ້ໃດທີ່ເຊື່ອໃນເຮົາ ການງານທີ່ເຮົາ
ເຮັດນີ້ ຜູ້ນັ້ນຊິໄດ້ເຮັດການງານທີ່ໃຫຍ່ໂຕຍິ່ງກວ່ານີ້ອີກ ຍ້ອນວ່າເຮົາຊິກັບໄປຢູ່
ກັບພຣະເຈົ້າຜູ້ເປັນພໍ່ຂອງເຮົາ
14:13 ຈັ່ງຊັ້ນ ພວກເຈົ້າຊິຂໍອີຫຍັງນໍາເພິ່ນ ໃຫ້ຂໍໂດຍໃນນາມຂອງເຮົາ ແລ້ວເຮົາຊິ
ເຮັດແນວນັ້ນໃຫ້ ເພື່ອພຣະເຈົ້າຜູ້ເປັນພໍ່ຊິໄດ້ຮັບພຣະກຽດໂດຍທາງເຮົາຜູ້ເປັນ
ພຣະບຸດ ນີ້

14:14 ຄື ຄັນພວກເຈົ້າຊິຂໍແນວໃດກໍຕາມ ກໍໃຫ້ຂໍໂດຍໃນນາມຂອງເຮົາ ເຮົາຊິເຮັດ
ແນວນັ້ນໃຫ້
14:15 ຄັນພວກເຈົ້າຮັກແພງເຮົາອີຫລີ ກໍໃຫ້ຮັກສາຫລັກຄໍາສັ່ງຂອງເຮົາໄວ້ນໍາ
14:16 ແລ້ວເຮົາຊິຂໍຈາກພຣະເຈົ້າຜູ້ເປັນພໍ່ ແລ້ວເພິ່ນຊິໃຊ້ອີກຜູ້ໜຶ່ງມາຢູ່ນໍາເຈົ້າ
ເປັນຜູ້ຊ່ອຍປອບໂຍນໃຈພວກເຈົ້າ ແລ້ວເພິ່ນຜູ້ນັ້ນກໍຊິສະຖິດຢູ່ນໍາຕະຫລອດ-
ໄປເປັນນິດ
14:17 ຄືອົງ ພຣະວິນຍານ ແຫ່ງຄວາມຈິງນັ້ນເນາະ ຊຶ່ງເພິ່ນເປັນຜູ້ທີ່ຊາວໂລກບໍ່
ສາມາດທີ່ຊິຮັບເອົາໄດ້ ຍ້ອນວ່າພວກເຂົາບໍ່ຮູ້ບໍ່ເຫັນເພິ່ນ ແຕ່ວ່າພວກເຈົ້າໄດ້ຮູ້-
ຈັກເພິ່ນແລ້ວ ຍ້ອນວ່າເພິ່ນໄດ້ຢູ່ນໍາພວກເຈົ້າ ແລ້ວອີກຈັກໜ່ອຍເພິ່ນກໍຊິສະຖິດ
ຢູ່ໃນພວກເຈົ້າ
14:18 ເຮົາຊິບໍ່ປະບໍ່ຖິ້ມພວກເຈົ້າໄວ້ຄືກັນກັບລູກກໍາພ້າດອກ ແຕ່ວ່າເຮົາຊິກັບມາ
ຫາເຈົ້າອີກ
14:19 ອີກຈັກໜ່ອຍ ຊາວໂລກຊິບໍ່ເຫັນເຮົາອີກ ແຕ່ພວກເຈົ້າເຫັນເຮົາຢູ່ ແລ້ວຍ້ອນ
ເຫດວ່າເຮົາດໍາລົງຢູ່ ພວກເຈົ້າກໍຊິດໍາລົງຢູ່ຄືກັນ
14:20 ແລ້ວໃນມື້ນັ້ນ ພວກເຈົ້າຊິຮູ້ວ່າເຮົາເປັນອັນໜຶ່ງອັນດຽວກັນໃນພຣະເຈົ້າຜູ້
ເປັນພໍ່ຂອງເຮົາ ແລ້ວພວກເຈົ້າກໍຢູ່ໃນເຮົາ ກັບເຮົາກໍຢູ່ໃນເຈົ້າ
14:21 ແລ້ວຜູ້ໃດທີ່ມີຫລັກຄໍາສັ່ງຂອງເຮົາ ກັບໄດ້ຮັກສາມັນໄວ້ ເຂົາຜູ້ນັ້ນເປັນຄົນທີ່
ຮັກແພງເຮົາ ແລ້ວສ່ວນຜູ້ທີ່ຮັກແພງເຮົານັ້ນ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ກໍຊິຮັກ-
ແພງຄົນຜູ້ນັ້ນ ແລ້ວເຮົາກໍຊິຮັກແພງເຂົາຄືກັນ ກັບຊິສໍາແດງໃຫ້ເຂົາຮູ້ວ່າເຮົາຢູ່
ນໍາ"
14:22 ບັດນີ້ ຢູດາ (ບໍ່ແມ່ນ ຢູດາ ອິດສະກາຣິອົດ ) ໄດ້ຖາມວ່າ "ນາຍຜູ້ຂ້າ ເອີຍ ຊິ
ເຮັດຈັ່ງໃດນໍ້ ເຖິງຊິສໍາແດງນາຍເອງໃຫ້ພວກຜູ້ຂ້າ ແລ້ວບໍ່ໄດ້ສໍາແດງໃຫ້ຊາວ
ໂລກ"
14:23 ພຣະເຢຊູ ເລີຍຕອບເຂົາວ່າ "ຄັນຜູ້ໃດຮັກແພງເຮົາ ເຂົາກໍຊິເຮັດນໍາຄໍາຂອງ
ເຮົາ ແລ້ວພຣະເຈົ້າຜູ້ເປັນພໍ່ຂອງເຮົາກໍຊິຮັກແພງເຂົາ ແລ້ວເພິ່ນກັບເຮົາກໍຊິມາ
ຫາເຂົາ ມາສະຖິດຢູ່ນໍາເຂົາຜູ້ນັ້ນ

14:24 ບັດນີ້ ສ່ວນຜູ້ໃດທີ່ບໍ່ຮັກແພງເຮົາ ຜູ້ນັ້ນບໍ່ໄດ້ຮັກສາຖ້ອຍຄຳຂອງເຮົາ ແລ້ວ
ຖ້ອຍຄຳທີ່ພວກເຈົ້າພວມໄດ້ຍິນຢູ່ນີ້ ມັນບໍ່ແມ່ນຄຳຂອງເຮົາເອງ ແຕ່ມາຈາກ
ພຣະເຈົ້າຜູ້ເປັນພໍ່ ຜູ້ເພິ່ນທີ່ໃຊ້ເຮົາມາ
14:25 ແນວໝູ່ນີ້ ເຮົາໄດ້ເວົ້າຕອນເຮົາຍັງຢູ່ນຳພວກເຈົ້າ
14:26 ແຕ່ວ່າ ບັດຜູ້ຊ່ອຍປອບໂຍນມາແລ້ວນັ້ນ ຄືອົງ ພຣະວິນຍານ ທີ່ພຣະເຈົ້າຜູ້
ເປັນພໍ່ຊິໃຊ້ມາໃນນາມຂອງເຮົາ ເພິ່ນຊິສອນພວກເຈົ້າໝົດຄູ່ອັນຄູ່ແນວ ແລ້ວຊິ
ຊ່ອຍໃຫ້ພວກເຈົ້າຄຶດອອກໄດ້ໃນໝົດຄູ່ອັນຄູ່ແນວທີ່ເຮົາເຄີຍເວົ້າໃຫ້ຟັງນັ້ນ
14:27 ເຮົາຊິໃຫ້ຄວາມສະຫງົບສຸກຂອງເຮົາໄວ້ກັບເຈົ້າ ແລ້ວຄວາມສະຫງົບສຸກທີ່
ເຮົາໃຫ້ນັ້ນ ບໍ່ຄືຄວາມສະຫງົບສຸກທີ່ໂລກໃຫ້ ຈັ່ງຊັ້ນ ຢ່າອຸກອັ່ງໜັກໃຈຫລາຍ ກັບ
ບໍ່ໃຫ້ຕົກໃຈຢ້ານເລີຍ
14:28 ພວກເຈົ້າເຄີຍໄດ້ຍິນເຮົາເວົ້າວ່າ ‘ເຮົາຊິອອກຈາກນີ້ໄປ ແລ້ວຊິໄດ້ກັບມາຫາ
ພວກເຈົ້າອີກ’ ຄັ້ນພວກເຈົ້າຮັກແພງເຮົາອີຫລີ ພວກເຈົ້າຄືຊິດີໃຈນຳເຮົາ ທີ່ວ່າ
‘ເຮົາຊິໄປຫາພຣະເຈົ້າຜູ້ເປັນພໍ່’ ຍ້ອນວ່າພຣະເຈົ້າຜູ້ເປັນພໍ່ຂອງເຮົານັ້ນ ກໍແຮງ
ຍິ່ງໃຫຍ່ກວ່າເຮົາອີກ
14:29 ແລ້ວເຮົາໄດ້ບອກພວກເຈົ້າໄວ້ ກ່ອນທີ່ມັນຊິເປັນໄປ ເພື່ອວ່າບັດມັນເປັນໄປ
ແລ້ວ ພວກເຈົ້າຈັ່ງຊິມີຄວາມເຊື່ອໝັ້ນ
14:30 ແລ້ວແຕ່ນີ້ໄປ ເຮົາຊິບໍ່ໄດ້ເວົ້ານຳພວກເຈົ້າຫລາຍ ຍ້ອນວ່າເທບເຈົ້າຜູ້ຄອບ-
ຄອງເໜືອໂລກນີ້ພວມຊິມາ ແຕ່ກໍຢ່າມັນ ມັນບໍ່ມີອຳນາດອີຫຍັງເໜືອເຮົາດອກ
14:31 ແຕ່ເພື່ອວ່າຊາວໂລກທັງຫລາຍຊິໄດ້ຮູ້ວ່າເຮົາຮັກແພງພຣະເຈົ້າຜູ້ເປັນພໍ່ອີ-
ຫລີ ເຮົາຈັ່ງເຮັດຄູ່ອັນຄູ່ແນວ ຕາມທີ່ເພິ່ນສັ່ງໄວ້ ໃຫ້ລຸກຊະ ບັດນີ້ ໃຫ້ພວກເຮົາ
ພາກັນໄປຈາກໝ້ອງນີ້ເຖີ”

## ໂຢຮັນ ບົດທີ 15

15:1 ເຮົາຄືເຄືອອະງຸ່ນອັນແທ້ຈິງ ແລ້ວພຣະເຈົ້າຜູ້ເປັນພໍ່ຂອງເຮົາກໍເປັນນາຍສວນ
15:2 ສ່ວນງ່າໃດໆ ຢູ່ໃນເຮົາທີ່ບໍ່ເກີດຜົນ ເພິ່ນກໍເອົາຂີ້ນ ແລ້ວສ່ວນງ່າໃດໆ ທີ່ເກີດ
ຜົນ ເພິ່ນກໍຊຳລະໃຫ້ສະອາດງາມເພື່ອໃຫ້ເກີດຜົນຫລາຍຂື້ນ

15:3 ສ່ວນພວກເຈົ້ານັ້ນ ໄດ້ຮັບການຊຳລະໃຫ້ສະອາດໂດຍຖ້ອຍຄຳທີ່ເຮົາໄດ້ເວົ້າ
ນຳພວກເຈົ້າຢູ່ແລ້ວ
15:4 ໃຫ້ຄົງຢູ່ໃນເຮົາ ແລ້ວເຮົາຄົງຢູ່ໃນເຈົ້າ ຄືງ່າບໍ່ສາມາດເກີດຜົນໄດ້ນອກຈາກ
ຄົງຢູ່ໃນເຄືອຂອງມັນ ພວກເຈົ້າເກີດຜົນບໍ່ໄດ້ຄືກັນ ນອກຈາກຄົງຢູ່ໃນເຮົາ
15:5 ເຮົາເປັນເຄືອອະງຸ່ນນັ້ນ ແລ້ວພວກເຈົ້າກໍເປັນງ່າ ຜູ້ທີ່ຄົງຢູ່ໃນເຮົາ ແລ້ວເຮົາ
ຄົງຢູ່ໃນເຂົາ ຜູ້ນັ້ນເກີດຜົນຢ່າງຫລາຍ ໂດຍວ່ານອກຈາກຄົງຢູ່ໃນເຮົາແລ້ວ ເຈົ້າ
ເຮັດຫຍັງບໍ່ໄດ້ເລີຍ
15:6 ສ່ວນຜູ້ທີ່ບໍ່ໄດ້ຄົງຢູ່ໃນເຮົາເລີຍ ຜູ້ນັ້ນກໍຫ່ຽວແຫ້ງລົງຄືງ່າຕາຍ ງ່າແນວນັ້ນມີ
ແຕ່ຊິຖືກໂຍນອອກໄປ ເກັບເອົາໄປເຜົາ *(ໃຫ້ເບິ່ງ 1 ໂກຣິນໂທ 3:11-15)*
15:7 ແຕ່ຄັ່ນເຈົ້າຄົງຢູ່ໃນເຮົາ ແລ້ວຖ້ອຍຄຳຂອງເຮົາຄົງຢູ່ໃນເຈົ້າ ເຈົ້າຊິຂໍແນວໃດ
ກໍໄດ້ຕາມທີ່ປາດຖະໜາ ແລ້ວເຮົາຊິເຮັດແນວນັ້ນໃຫ້ເຈົ້າ
15:8 ໂດຍນີ້ເນາະ ພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຊິໄດ້ຮັບພຣະກຽດ ທີ່ວ່າພວກເຈົ້າ
ເກີດຜົນຫລາຍ ພວກເຈົ້າຈັ່ງຊິເປັນລູກສິດຂອງເຮົາ
15:9 ແລ້ວພຣະເຈົ້າຜູ້ເປັນພໍ່ຮັກແພງເຮົາສ່ຳໃດ ເຮົາກໍຮັກແພງພວກເຈົ້າສ່ຳນັ້ນ
ຈັ່ງຊັ້ນໃຫ້ຄົງຢູ່ໃນຄວາມຮັກຂອງເຮົາເດີ້
15:10 ຄືຄັ່ນພວກເຈົ້າຮັກສາຫລັກຄຳສັ່ງຂອງເຮົາໄວ້ ພວກເຈົ້າຊິໄດ້ຄົງຢູ່ໃນຄວາມ
ຮັກຂອງເຮົາ ຄືກັນກັບທີ່ເຮົາໄດ້ຮັກສາຫລັກຄຳສັ່ງຂອງພຣະເຈົ້າຜູ້ເປັນພໍ່ໄວ້
ແລ້ວຄົງຢູ່ໃນຄວາມຮັກຂອງເພິ່ນ
15:11 ເຮົາໄດ້ເວົ້າຈັ່ງຊີ້ໃຫ້ພວກເຈົ້າ ກໍເພື່ອວ່າ ຄວາມຊົມຊື່ນຍິນດີຂອງເຮົາຊິໄດ້
ຄົງຢູ່ໃນພວກເຈົ້າ ແລ້ວເພື່ອວ່າ ຄວາມຊົມຊື່ນຍິນດີຂອງພວກເຈົ້ານັ້ນຊິໄດ້ເຕັມ
ປ່ຽມ
15:12 ແລ້ວຫລັກຄຳສັ່ງຂອງເຮົາກໍຄື ໃຫ້ຮັກແພງກັນແລະກັນ ຄືກັນກັບທີ່ເຮົາຮັກ-
ແພງພວກເຈົ້າ
15:13 ບໍ່ເຄີຍມີໃຜມີຄວາມຮັກຫລາຍກວ່ານີ້ ທີ່ວ່າໄດ້ວາງຊີວິດລົງເພື່ອໝູ່
15:14 ແລ້ວພວກເຈົ້າເປັນໝູ່ຂອງເຮົາ ຄັ່ນເຈົ້າໄດ້ເຮັດຕາມແນວທີ່ເຮົາສັ່ງໄວ້ນັ້ນ

15:15 ຄືເຮົາບໍ່ໄດ້ເອີ້ນພວກເຈົ້າວ່າຄົນໃຊ້ອີກຕໍ່ໄປ ຍ້ອນວ່າຄົນໃຊ້ບໍ່ຮູ້ຈັກໃນການ
ງານຂອງນາຍໂຕເອງເຮັດ ແຕ່ເຮົາເອີ້ນເຈົ້າວ່າເປັນໝູ່ຂອງເຮົາ ໂດຍວ່າໝົດຄູ່
ອັນຄູ່ແນວທີ່ເຮົາໄດ້ຍິນຈາກພຣະເຈົ້າຜູ້ເປັນພໍ່ຂອງເຮົາ ເຮົາກໍໃຫ້ພວກເຈົ້າຮູ້ຈັກ
ນຳໝົດ
15:16 ພວກເຈົ້າບໍ່ໄດ້ເລືອກເຮົາດອກ ແຕ່ວ່າເຮົາໄດ້ເລືອກພວກເຈົ້າ ແຕ່ງຕັ້ງພວກ
ເຈົ້າໄວ້ ເພື່ອໃຫ້ພວກເຈົ້າອອກໄປເກີດຜົນ ແລ້ວຜົນຂອງພວກເຈົ້ານັ້ນຄົງຢູ່ຢ່າງ
ຖາວອນ ແລ້ວພວກເຈົ້າຊິຂໍອີຫຍັງຈາກພຣະເຈົ້າຜູ້ເປັນພໍ່ໂດຍໃນນາມຂອງເຮົາ
ເພິ່ນກໍຊິກະລຸນາແນວນັ້ນໃຫ້ເຈົ້າ
15:17 ແລ້ວເຮົາສັ່ງແນວໝູ່ນີ້ໄວ້ໃຫ້ພວກເຈົ້າ ກໍເພື່ອໃຫ້ຮັກແພງກັນແລະກັນ
15:18 ຄັ່ນໂລກຊັງພວກເຈົ້າກໍໃຫ້ຮູ້ໄວ້ວ່າ ໂລກເຄີຍຊັງເຮົາມາກ່ອນທີ່ມັນຊັງເຈົ້າ
15:19 ຄັ່ນພວກເຈົ້າຢູ່ຝ່າຍໂລກ ໂລກນີ້ກໍຊິຮັກແພງພວກເຈົ້າ ແຕ່ບັດນີ້ພວກເຈົ້າບໍ່
ໄດ້ຢູ່ຝ່າຍໂລກ ຄືເຮົາໄດ້ເລືອກເຈົ້າອອກຈາກໂລກແລ້ວ ຈັ່ງຊັ້ນໂລກຈັ່ງກຽດຊັງ
ຊັງພວກເຈົ້າ
15:20 ໃຫ້ຈື່ໄວ້ເດີ້ຄຳທີ່ເຮົາເຄີຍບອກແລ້ວວ່າ ບໍ່ມີຄົນໃຊ້ຄົນໃດໃຫຍ່ກວ່ານາຍເຈົ້າ
ຂອງ ຄືຄັ່ນພວກເຂົາເຄີຍຂົ່ມເຫງເຮົາ ເຂົາກໍຊິຂົ່ມເຫງພວກເຈົ້າຄືກັນ ແລ້ວຄັ່ນ
ເຂົາເຄີຍຮັກສາຄຳຂອງເຮົາ ເຂົາກໍຊິຮັກສາຄຳຂອງເຈົ້າຄືກັນ
15:21 ແຕ່ວ່າ ພວກເຂົາກໍຊິເຮັດແນວໝູ່ນີ້ໃສ່ພວກເຈົ້າຍ້ອນນາມຂອງເຮົາ ໂດຍວ່າ
ພວກເຂົາບໍ່ຮູ້ຈັກຜູ້ນັ້ນທີ່ໄດ້ໃຊ້ເຮົາມາ
15:22 ແລ້ວຄັ່ນເຮົາບໍ່ໄດ້ມາຫາ ມາບອກພວກເຂົາ ພວກເຂົາຊິບໍ່ເປັນບາບດອກ
ແຕ່ທັນທີພວກເຂົາບໍ່ມີຂໍ້ແກ້ໂຕເລີຍ ໃນເລື່ອງຄວາມຜິດບາບຂອງໂຕເຂົາເອງ
15:23 ຄືຜູ້ທີ່ຊັງເຮົາກໍຊັງພຣະເຈົ້າຜູ້ເປັນພໍ່ຂອງເຮົານຳ
15:24 ຄັ່ນເຮົາບໍ່ໄດ້ມາເຮັດການງານແນວທີ່ບໍ່ເຄີຍມີໃຜເຄີຍເຮັດຕໍ່ໜ້າພວກເຂົາມາ
ກ່ອນ ພວກເຂົາຊິບໍ່ເປັນບາບດອກ ແຕ່ທັນທີເຂົາໄດ້ຮູ້ເຫັນກັບໄດ້ຊັງເຮົາ ພ້ອມ
ທັງພຣະເຈົ້າຜູ້ເປັນພໍ່ຂອງເຮົານຳ
15:25 ແຕ່ວ່ານີ້ໄດ້ເປັນໄປແລ້ວ ຄືກັນກັບມີຄຳຂຽນໄວ້ໃນກົດບັນຍັດຂອງພວກເຂົາ
ຊິໄດ້ສຳເລັດ ວ່າ “ເຂົາໄດ້ຊັງເຮົາໂດຍບໍ່ມີເຫດຜົນອີຫຍັງເລີຍ”

15:26 ແຕ່ບັດຜູ້ຊ່ອຍປອບໂຍນມາແລ້ວນັ້ນ ແມ່ນອົງ ພຣະວິນຍານ ແຫ່ງຄວາມຈິງ
ຜູ້ທີ່ເຮົາຊິໃຊ້ມາຈາກພຣະເຈົ້າຜູ້ເປັນພໍ່ ຜູ້ນັ້ນເນາະຊິເປັນພະຍານເຖິງເຮົາ
15:27 ແລ້ວພວກເຈົ້າກໍຊິເປັນພະຍານເຖິງເຮົາຄືກັນ ຍ້ອນວ່າພວກເຈົ້າເຄີຍຢູ່ນໍາ
ເຮົາແຕ່ທໍາອິດມາແລ້ວ

# ໂຢຮັນ ບົດທີ 16

16:1 ເຮົາໄດ້ບອກແນວໝູ່ນີ້ໃຫ້ພວກເຈົ້າແລ້ວ ເພື່ອບໍ່ໃຫ້ພວກເຈົ້າສະດຸດໃຈ
16:2 ເຂົາຊິໄລ່ພວກເຈົ້າອອກຈາກສາລາທໍາ ເອີ້ ແລ້ວຊິມີຍາມໜຶ່ງມາຮອດ ຄົນຜູ້ທີ່
ຂ້າພວກເຈົ້າ ເຂົາຊິຄຶດວ່າເປັນການຮັບໃຊ້ພຣະເຈົ້າ
16:3 ແລ້ວພວກເຂົາກໍຊິເຮັດຈັ່ງຊັ້ນ ຍ້ອນວ່າເຂົາບໍ່ເຄີຍຮູ້ຈັກພຣະເຈົ້າຜູ້ເປັນພໍ່ເລີຍ
ກັບບໍ່ຮູ້ຈັກເຮົານໍາ
16:4 ບັດນີ້ ເຮົາບອກພວກເຈົ້າໄວ້ກ່ອນ ເພື່ອບັດຮອດຍາມນັ້ນເຈົ້າຊິໄດ້ຈື່ແນວທີ່
ເຮົາເຄີຍບອກເຖິງພວກເຂົາແລ້ວ ເຫດທີ່ເຮົາບໍ່ໄດ້ບອກພວກເຈົ້າມາກ່ອນ ກໍຍ້ອນ
ວ່າຫວ່າງນັ້ນເຮົາຍັງຢູ່ກັບພວກເຈົ້າ
16:5 ແຕ່ບັດນີ້ ເຮົາຊິໄປຫາພຣະເຈົ້າຜູ້ເພິ່ນທີ່ໃຊ້ເຮົາມານັ້ນ ກໍຍັງບໍ່ມີໃຜໄດ້ຖາມ
ເຮົາວ່າ “ນາຍຊິໄປໃສ”
16:6 ແຕ່ຍ້ອນວ່າເຮົາໄດ້ເວົ້າແນວນີ້ ພວກເຈົ້າກໍຍັງເສຍໃຈຫລາຍ
16:7 ຈັ່ງໃດກໍຕາມ ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ຄືທີ່ເຮົາຊິໄປຈາກພວກເຈົ້າ
ກໍເປັນປະໂຫຍດໃຫ້ພວກເຈົ້າ ຄືຄັ່ນເຮົາບໍ່ໄປ ເພິ່ນຜູ້ຊ່ອຍປອບໂຍນນັ້ນ ຊິບໍ່ໄດ້
ມາຫາເຈົ້າດອກ ແຕ່ຄັ່ນເຮົາໄປແລ້ວ ເຮົາກໍຊິໃຊ້ຜູ້ຊ່ອຍປອບໂຍນນັ້ນມາຫາເຈົ້າ
16:8 ບັດເພິ່ນລົງມາແລ້ວ ເພິ່ນຊິມາເຮັດໃຫ້ຊາວໂລກສໍານຶກໂຕໃນເລື່ອງຄວາມ
ຜິດບາບ ໃນເລື່ອງຄວາມຊອບທໍາ ກັບໃນເລື່ອງການຕັດສິນລົງໂທດ
16:9 ໃນເລື່ອງຄວາມຜິດບາບຍ້ອນວ່າເຂົາບໍ່ຍອມເຊື່ອວາງໃຈໃນເຮົາ
16:10 ໃນເລື່ອງຄວາມຊອບທໍາຍ້ອນວ່າເຮົາຊິໄປຫາພຣະເຈົ້າຜູ້ເປັນພໍ່ຂອງເຮົາ
ແລ້ວພວກເຈົ້າຊິບໍ່ເຫັນເຮົາອີກຕໍ່ໄປ
16:11 ແລ້ວໃນເລື່ອງການຕັດສິນລົງໂທດຍ້ອນວ່າເທບເຈົ້າຜູ້ຄອບຄອງເໜືອໂລກ
ນີ້ ໄດ້ຖືກການຕັດສິນລົງໂທດແລ້ວ

16:12 ເຮົາຍັງມີອີກຫລາຍອັນຫລາຍແນວທີ່ຊິບອກກັບພວກເຈົ້າ ແຕ່ພວກເຈົ້າກໍຍັງ
ຮັບບໍ່ໄດ້
16:13 ຈັ່ງໃດກໍຕາມ ບັດພໍ ພຣະວິນຍານ ແຫ່ງຄວາມຈິງລົງມາແລ້ວ ເພິ່ນກໍຊິນຳ
ພວກເຈົ້າໄປສູ່ຄວາມເປັນຈິງທັງໝົດ ຄືເພິ່ນຊິບໍ່ໄດ້ເວົ້າຕາມແນວຂອງເພິ່ນເອງ
ແຕ່ຊິເວົ້າເຖິງຄູ່ແນວທີ່ເພິ່ນໄດ້ຍິນມາ ກັບເພິ່ນຊິບອກໃຫ້ພວກເຈົ້າຮູ້ຈັກເຖິງແນວ
ທີ່ຊິເປັນໄປໃນພາຍໜ້າ
16:14 ແລ້ວເພິ່ນກໍຊິຖວາຍກຽດໃຫ້ເຮົາ ໂດຍວ່າເພິ່ນຊິນຳເອົາແນວຕ່າງໆ ຂອງ
ເຮົານັ້ນມາເປີດ ເຜີຍໃຫ້ພວກເຈົ້າ
16:15 ຄູ່ຢ່າງທີ່ເປັນຂອງພຣະເຈົ້າຜູ້ເປັນພໍ່ກໍເປັນຂອງເຮົານຳ ຈັ່ງຊັ້ນເຮົາໄດ້ບອກ
ກັບພວກເຈົ້າວ່າ ພຣະວິນຍານ ຊິນຳເອົາແນວຂອງເຮົານັ້ນ ມາເປີດເຜີຍໃຫ້ພວກ
ເຈົ້າ
16:16 ອີກຈັກໜ່ອຍ ພວກເຈົ້າຊິບໍ່ໄດ້ເຫັນເຮົາ ແລ້ວຫລັງຈາກນັ້ນຈັກໜ່ອຍຊິໄດ້
ເຫັນເຮົາອີກ ຍ້ອນວ່າເຮົາໄປຫາພຣະເຈົ້າຜູ້ເປັນພໍ່
16:17 ບັດນີ້ ລູກສິດຜູ້ລາງຄົນຖາມກັນວ່າ “ໝາຍຄວາມວ່າຈັ່ງໃດທີ່ນາຍຜູ້ຂ້າເວົ້າ
ກັບພວກເຮົາວ່າ ‘ຈັກໜ່ອຍພວກເຈົ້າຊິບໍ່ໄດ້ເຫັນເຮົາ ແລ້ວຫລັງຈາກນັ້ນອີກຈັກ-
ໜ່ອຍຊິໄດ້ເຫັນເຮົາອີກ’ ແລ້ວຍັງເວົ້າວ່າ ‘ເຮົາຊິໄປຫາພຣະເຈົ້າຜູ້ເປັນພໍ່’”
16:18 ແລ້ວພວກເຂົາຖາມກັນອີກວ່າ “ຄຳທີ່ເພິ່ນເວົ້າວ່າ ‘ຫລັງຈາກນັ້ນຈັກໜ່ອຍ’
ມັນໝາຍຄວາມວ່າແນວໃດ ພວກເຮົາບໍ່ເຂົ້າໃຈໃນຄວາມເວົ້າຂອງເພິ່ນເລີຍ”
16:19 ບັດນີ້ ພຣະເຢຊູ ຮູ້ເຖິງແນວທີ່ເຂົາຖາມເພິ່ນ ເພິ່ນເລີຍເວົ້າວ່າ “ພວກເຈົ້າ
ຖາມກັນເຖິງຄວາມໝາຍໃນເລື່ອງທີ່ເຮົາເວົ້າວ່າ ‘ອີກຈັກໜ່ອຍພວກເຈົ້າຊິບໍ່ໄດ້
ເຫັນເຮົາ ແລ້ວອີກຈັກໜ່ອຍກໍຊິໄດ້ເຫັນເຮົາອີກ’
16:20 ເຮົາຊິບອກພວກເຈົ້າຕາມຊື່ນີ້ເນາະ ວ່າພວກເຈົ້າຊິຮ້ອງໄຫ້ເປັນທຸກ ແຕ່ຄົນ
ທັງໂລກຊິຊົມຊື່ນຍິນດີ ແລ້ວການທີ່ພວກເຈົ້າຊິເປັນທຸກ ຄວາມທຸກນັ້ນ ຊິກາຍ-
ເປັນຄວາມຊົມຊື່ນຍິນດີ

16:21 ຄືແມ່ຍິງຍາມຊິເຈັບທ້ອງອອກລູກ ກໍຊິມີຄວາມທຸກຫລາຍ ແຕ່ບັດເຂົາອອກ
ລູກແລ້ວເຂົາບໍ່ຄຶດເຖິງຄວາມເຈັບປວດນັ້ນອີກ ຍ້ອນວ່າດີໃຈຫລາຍທີ່ມີລູກນ້ອຍ
ເກີດມາໃນໂລກ
16:22 ຈັ່ງຊັ້ນ ໃນຕອນນີ້ພວກເຈົ້າທຸກໃຈຫລາຍ ແຕ່ວ່າເຮົາຊິເຫັນພວກເຈົ້າອີກ
ແລ້ວໃນຍາມນັ້ນໃຈຂອງພວກເຈົ້າຊິມີຄວາມປິຕິຍິນດີ ແລ້ວຄວາມປິຕິຍິນດີນັ້ນ
ບໍ່ມີໃຜຊິເອົາຈາກເຈົ້າໄປໄດ້ເລີຍ
16:23 ແລ້ວໃນມື້ນັ້ນ ພວກເຈົ້າຊິບໍ່ຂໍອີຫຍັງນຳເຮົາອີກ ຄືເຮົາຊິບອກພວກເຈົ້າຕາມ
ຊື່ນີ້ເນາະ ວ່າອີຫຍັງທີ່ພວກເຈົ້າຂໍ ກໍໃຫ້ຂໍນຳພຣະເຈົ້າຜູ້ເປັນພໍ່ໂດຍໃນນາມຂອງ
ເຮົາ ແລ້ວເພິ່ນກໍຊິໂຜດໃຫ້ແນວນັ້ນກັບພວກເຈົ້າ
16:24 ເຖິງບັດນີ້ ພວກເຈົ້າກໍຍັງບໍ່ໄດ້ຂໍອີຫຍັງໃນນາມຂອງເຮົາເລີຍ ໃຫ້ຂໍເດີ້ ແລ້ວ
ຊິໄດ້ ເພື່ອຄວາມຊົມຊື່ນຍິນດີຂອງພວກເຈົ້າຊິໄດ້ເຕັມປ່ຽມ
16:25 ແນວໝູ່ນີ້ເຮົາໄດ້ເວົ້າກັບພວກເຈົ້າເປັນການປຽບທຽບ ແຕ່ວ່າມີຍາມທີ່ຊິມາທີ່
ເຮົາຊິບໍ່ເວົ້ານຳເຈົ້າເປັນການປຽບທຽບອີກ ແຕ່ເຮົາຊິເວົ້າເລື່ອງພຣະເຈົ້າຜູ້ເປັນພໍ່
ໃຫ້ເຈົ້າຢ່າງເປີດເຜີຍ
16:26 ບັດຮອດມື້ນັ້ນແລ້ວ ພວກເຈົ້າຊິຂໍອີຫຍັງໃນນາມຂອງເຮົາ ແລ້ວເຮົາຊິບໍ່ໄດ້
ບອກພວກເຈົ້າວ່າ ເຮົາຊິຂໍຈາກພຣະເຈົ້າຜູ້ເປັນພໍ່ເພື່ອພວກເຈົ້າ
16:27 ຍ້ອນວ່າພຣະເຈົ້າຜູ້ເປັນພໍ່ຮັກແພງພວກເຈົ້າ ຍ້ອນພວກເຈົ້າຮັກແພງເຮົາ
ແລ້ວເຊື່ອວ່າເຮົາໄດ້ມາຈາກເພິ່ນ
16:28 ຄືເຮົາໄດ້ມາຈາກພຣະເຈົ້າຜູ້ເປັນພໍ່ ແລ້ວໄດ້ເຂົ້າມາໃນໂລກ ແລ້ວບັດນີ້ເຮົາ
ຊິອອກຈາກໂລກນີ້ກັບໄປຫາພຣະເຈົ້າຜູ້ເປັນພໍ່ອີກ”
16:29 ພວກລູກສິດເລີຍເວົ້ານຳ ພຣະເຢຊູ ວ່າ “ເອີ້ ນາຍຜູ້ຂ້າພວມເວົ້າຊັດເຈນ
ແລ້ວບັດນີ້ ບໍ່ໄດ້ເວົ້າເປັນຄວາມປຽບທຽບເລີຍ
16:30 ບັດນີ້ ພວກຜູ້ຂ້າໝັ້ນໃຈແລ້ວ ວ່ານາຍຜູ້ຂ້າກໍຮູ້ຈັກຄູ່ອັນຄູ່ແນວ ແລ້ວບໍ່ຕ້ອງ
ຖາມອີຫຍັງອີກ ໂດຍວ່າພວກຜູ້ຂ້າເຊື່ອໝັ້ນແລ້ວ ວ່າ ນາຍຜູ້ຂ້າໄດ້ມາຈາກພຣະ-
ເຈົ້າ”
16:31 ພຣະເຢຊູ ເລີຍຖາມເຂົາວ່າ “ບັດນີ້ພວກເຈົ້າເຊື່ອອີຫລີບໍ້

16:32 ນີ້ແຫລະ ຍາມນັ້ນຊິມາເຖິງ ແລ້ວໄດ້ມາຮອດແລ້ວບັດນີ້ ທີ່ວ່າພວກເຈົ້າຊິ
ແຕກກະຈັກກະຈາຍກັນໄປຂອງໃຜຂອງມັນ ປະເຮົາໄວ້ຢູ່ຜູ້ດຽວ ແຕ່ທີ່ຈິງເຮົາຊິບໍ່
ໄດ້ຢູ່ຜູ້ດຽວ ຍ້ອນວ່າພຣະເຈົ້າຜູ້ເປັນພໍ່ ເພິ່ນກໍຍັງສະຖິດຢູ່ນຳເຮົາ
16:33 ແນວໝູ່ນີ້ ເຮົາໄດ້ບອກພວກເຈົ້າໄວ້ ເພື່ອພວກເຈົ້າຊິມີຄວາມສະຫງົບສຸກ ຄື
ໃນໂລກນີ້ພວກເຈົ້າຊິໄດ້ຮັບຄວາມຍາກລຳບາກ ແຕ່ວ່າໃຫ້ມີຄວາມຍິນດີໄວ້ເດີ້
ຍ້ອນວ່າເຮົາຊະນະໂລກໄດ້ແລ້ວ"

## ໂຢຮັນ ບົດທີ 17

17:1 ພໍ ພຣະເຢຊູ ເວົ້າຖ້ອຍຄຳນີ້ແລ້ວ ເພິ່ນກໍເງີຍໜ້າຂຶ້ນໄປເບິ່ງເທິງຟ້າແລ້ວເວົ້າ
ວ່າ "ໂອ້ ພຣະເຈົ້າ ພໍ່ຂອງຜູ້ຂ້າເອີຍ ມັນໄດ້ຮອດຍາມນັ້ນແລ້ວ ຂໍພໍ່ທີ່ຊິມອບກຽດ
ໃຫ້ກັບລູກ ເພື່ອລູກຊິໄດ້ຕອບສະໜອງຖວາຍພຣະກຽດໃຫ້ກັບພໍ່ເຖີ້ນ
17:2 ຄືກັນກັບທີ່ພໍ່ໄດ້ມອບສິດອຳນາດໃຫ້ກັບຜູ້ຂ້າເໜືອມະນຸດໝົດທູ່ຄົນ ເພື່ອວ່າ
ຜູ້ຂ້າຊິໄດ້ໃຫ້ຊີວິດອັນຕະຫລອດໄປເປັນນິດກັບຜູ້ຄົນທັງຫລາຍທີ່ພໍ່ໄດ້ໃຫ້ໄວ້ກັບ
ລູກ
17:3 ແລ້ວຊີວິດອັນຕະຫລອດໄປເປັນນິດກໍເປັນແນວນີ້ ທີ່ວ່າເຂົາທັງຫລາຍໄດ້ຮູ້-
ຈັກພໍ່ ຜູ້ເປັນພຣະເຈົ້າທ່ຽງແທ້ແຕ່ຜູ້ດຽວ ແລ້ວຮູ້ຈັກຜູ້ຂ້ານຳ ຄື ພຣະເຢຊູຄຣິດ
ພຣະຜູ້ໂຜດທີ່ພໍ່ໄດ້ໃຊ້ມາ
17:4 ຜູ້ຂ້າໄດ້ຖວາຍພຣະກຽດໃຫ້ພໍ່ຢູ່ໃນໂລກນີ້ ກັບໄດ້ເຮັດການງານທີ່ພໍ່ໄດ້ມອບ
ໄວ້ກັບລູກ
17:5 ແລ້ວບັດນີ້ ພຣະເຈົ້າຜູ້ເປັນພໍ່ເອີຍ ຂໍໃຫ້ກຽດລູກພ້ອມກັບພໍ່ນຳ ໂດຍພຣະ-
ກຽດນັ້ນທີ່ລູກເຄີຍມີຮ່ວມກັນກັບພໍ່ຕັ້ງແຕ່ກ່ອນສ້າງໂລກ
17:6 ລູກໄດ້ເປີດເຜີຍພຣະນາມຂອງພໍ່ໃຫ້ກັບພວກຜູ້ຊາຍຜູ້ທີ່ພໍ່ໄດ້ມອບໃຫ້ລູກ
ອອກຈາກໂລກ ຊຶ່ງພວກເຂົາເປັນຄົນຂອງພໍ່ຢູ່ແລ້ວທີ່ພໍ່ໄດ້ໃຫ້ລູກ ແລ້ວພວກເຂົາ
ໄດ້ຮັກສາຄຳຂອງພໍ່ນຳ
17:7 ບັດນີ້ ພວກເຂົາໄດ້ຮູ້ຈັກວ່າ ໝົດທູ່ແນວທີ່ພໍ່ໄດ້ມອບໄວ້ກັບລູກນັ້ນ ໄດ້ມາ
ຈາກພໍ່

17:8 ໂດຍວ່າລູກໄດ້ໃຫ້ຖ້ອຍຄຳທີ່ພໍ່ໄດ້ຝາກໄວ້ກັບລູກນັ້ນ ແລ້ວພວກເຂົາໄດ້ຮັບ
ເອົາໄວ້ ກັບໄດ້ຮູ້ຈັກຄັກແນ່ວ່າລູກໄດ້ລົງມາຈາກພໍ່ ແລ້ວພວກເຂົາໄດ້ເຊື່ອໝັ້ນວ່າ
ພໍ່ໄດ້ໃຊ້ລູກມາ
17:9 ບັດນີ້ ລູກຈຶ່ງອະທິຖານວອນຂໍເພື່ອພວກເຂົາ ຄືລູກບໍ່ໄດ້ອະທິຖານວອນຂໍ
ເພື່ອໂລກ ແຕ່ໄດ້ວອນຂໍເພື່ອຄົນພວກນີ້ທີ່ພໍ່ໄດ້ມອບໄວ້ໃຫ້ກັບລູກ ຍ້ອນວ່າ
ພວກເຂົາເປັນຄົນຂອງພໍ່
17:10 ຄືໝົດທູ່ແນວທີ່ລູກມີຢູ່ກໍເປັນຂອງພໍ່ ແລ້ວທູ່ແນວທີ່ພໍ່ມີຢູ່ກໍເປັນຂອງລູກ
ແລ້ວລູກໄດ້ຮັບກຽດໃນຄົນພວກນີ້ນຳ
17:11 ບັດນີ້ ລູກບໍ່ໄດ້ຢູ່ໃນໂລກນີ້ອີກຕໍ່ໄປ ແຕ່ວ່າພວກເຂົາກໍຍັງຢູ່ໃນໂລກ ແຕ່ລູກ
ຊິກັບໄປຫາພໍ່ ໂອພໍ່ ຜູ້ສັກສິດບໍລິສຸດເອີຍ ຂໍກະລຸນາເບິ່ງແຍງຮັກສາພວກເຂົານີ້
ໄວ້ໃນພຣະນາມຂອງພໍ່ ຜູ້ທີ່ພໍ່ໄດ້ມອບໄວ້ໃຫ້ກັບລູກນີ້ ເພື່ອພວກເຂົາຊິໄດ້ເປັນ
ນ້ຳໜຶ່ງໃຈດຽວກັນ ຄືກັນກັບພໍ່ກັບລູກ
17:12 ບັດລູກຍັງຢູ່ກັບພວກເຂົາຕອນຢູ່ໃນໂລກ ລູກໄດ້ຮັກສາພວກເຂົາໄວ້ຢ່າງ
ປອດໄພໃນພຣະນາມຂອງພໍ່ ຄືລູກໄດ້ປ້ອງກັນພວກເຂົາຜູ້ທີ່ພໍ່ໄດ້ມອບໄວ້ໃຫ້ນັ້ນ
ແລ້ວບໍ່ມີໃຜໄດ້ຫລົງທາງໄປເລີຍ ນອກຈາກຜູ້ທີ່ຊິພິນາດນັ້ນເນາະ ເພື່ອໃຫ້ເປັນ
ໄປຕາມ ພຣະຄຳ ທີ່ໄດ້ກ່າວໄວ້ (ເບິ່ງ ເພງສັນລະເສີນ 41:9)
17:13 ແລ້ວບັດນີ້ ລູກພວມຊິກັບໄປຫາພໍ່ ແລ້ວລູກຈຶ່ງເວົ້າຈັ່ງຊີ້ຍາມຍັງຢູ່ໃນໂລກ
ເພື່ອພວກເຂົາຊິໄດ້ມີຄວາມຊົມຊື່ນຍິນດີຂອງລູກຢ່າງເຕັມປ່ຽມຢູ່ໃນໂຕເຂົາ
17:14 ລູກໄດ້ມອບຖ້ອຍຄຳຂອງພໍ່ໄວ້ໃຫ້ກັບພວກເຂົາ ແລ້ວຊາວໂລກໄດ້ຊັງພວກ-
ເຂົາ ຍ້ອນວ່າພວກເຂົາບໍ່ໄດ້ຢູ່ຝ່າຍໂລກນີ້ ຄືກັນກັບທີ່ລູກບໍ່ໄດ້ຢູ່ຝ່າຍໂລກ
17:15 ລູກບໍ່ໄດ້ຂໍໃຫ້ພໍ່ເອົາພວກເຂົາອອກຈາກໂລກດອກ ພຽງແຕ່ຂໍໃຫ້ພໍ່ຮັກສາ
ເຂົາໄວ້ຈາກເຈົ້າ ພະຍາມານ ຮ້າຍ
17:16 ພວກເຂົາບໍ່ໄດ້ຢູ່ຝ່າຍໂລກ ຄືກັນກັບທີ່ລູກບໍ່ໄດ້ຢູ່ຝ່າຍໂລກ
17:17 ຂໍແຍກພວກເຂົາໄວ້ໃຫ້ບໍລິສຸດສະເພາະພໍ່ດ້ວຍຫລັກຄວາມຈິງຂອງພໍ່
ພຣະຄຳ ຂອງພໍ່ນັ້ນຄືຄວາມຈິງ

17:18 ພໍ່ໄດ້ໃຊ້ລູກໃຫ້ເຂົ້າມາຢູ່ໃນໂລກສໍ່າໃດ ລູກກໍໄດ້ໃຊ້ພວກເຂົາໃຫ້ອອກໄປ
ໃນໂລກນີ້ສໍ່ານັ້ນຄືກັນ
17:19 ແລ້ວຍ້ອນເຫັນແກ່ພວກເຂົາເອງ ລູກໄດ້ອຸທິດຊີວິດໄວ້ສະເພາະ ເພື່ອພວກ-
ເຂົາຊິໄດ້ອຸທິດຊີວິດໄວ້ສະເພາະຫລັກຄວາມຈິງນັ້ນເນາະ
17:20 ລູກບໍ່ໄດ້ອະທິຖານວອນຂໍເພື່ອພວກເຂົາເທົ່ານັ້ນ ແຕ່ເພື່ອຄູ່ຄົນທີ່ຊິເຊື່ອ
ວາງໃຈໃນລູກນໍາ ໂດຍຄໍາພະຍານຂອງພວກເຂົາ
17:21 ເພື່ອວ່າເຂົາທັງຫລາຍຊິເປັນນໍ້າໜຶ່ງໃຈດຽວຕໍ່ກັນແລະກັນ ຄືກັນກັບທີ່ພໍ່ເປັນ
ນໍ້າໜຶ່ງໃຈດຽວກັນແລະກັນກັບລູກ ເພື່ອພວກເຂົາຊິເປັນນໍ້າໜຶ່ງໃຈດຽວກັນແລະ
ກັນກັບສອງພໍ່ລູກເຮົາ ເພື່ອໂລກຊິໄດ້ຮູ້ວ່າພໍ່ໄດ້ໃຊ້ລູກມາອີຫລີ
17:22 ແລ້ວກຽດທີ່ພໍ່ມອບໄວ້ກັບລູກນັ້ນ ລູກໄດ້ມອບໄວ້ກັບພວກເຂົານໍາ ເພື່ອເຂົາ
ຊິໄດ້ເປັນນໍ້າໜຶ່ງໃຈດຽວກັນແລະກັນ ຄືກັນກັບທີ່ພໍ່ກັບລູກໄດ້ເປັນນໍ້າໜຶ່ງໃຈດຽວ
ກັນນັ້ນ
17:23 ຄືລູກເປັນນໍ້າໜຶ່ງໃຈດຽວກັນກັບພວກເຂົາ ແລ້ວພໍ່ກໍເປັນນໍ້າໜຶ່ງໃຈດຽວກັນ-
ກັບລູກ ເພື່ອພວກເຂົາຊິໄດ້ເປັນນໍ້າໜຶ່ງໃຈດຽວກັນຢ່າງສົມບູນແບບ ເພື່ອໂລກຊິ
ໄດ້ຮູ້ວ່າພໍ່ໄດ້ໃຊ້ລູກມາ ພ້ອມໄດ້ຮັກແພງພວກເຂົາຄືກັນກັບທີ່ໄດ້ຮັກແພງລູກ
17:24 ພໍ່ເອີຍ ລູກປາດຖະໜາຢາກໃຫ້ພວກເຂົາທີ່ພໍ່ໄດ້ມອບໄວ້ໃຫ້ກັບລູກນີ້ ໃຫ້
ພວກເຂົາຢູ່ໜ້ອງດຽວກັນກັບລູກ ເພື່ອພວກເຂົາຊິໄດ້ເຫັນສະຫງ່າລາສີອັນຮຸ່ງ-
ເຮືອງຂອງລູກທີ່ພໍ່ໄດ້ໃຫ້ໄວ້ກັບລູກ ຍ້ອນວ່າພໍ່ໄດ້ຮັກແພງລູກມາຕັ້ງແຕ່ກ່ອນ
ສ້າງໂລກ
17:25 ໂອ້ ພໍ່ຜູ້ຍຸດຕິທໍາເອີຍ ໂລກນີ້ບໍ່ເຄີຍຮູ້ຈັກພໍ່ເລີຍ ແຕ່ວ່າລູກຮູ້ຈັກພໍ່ ແລ້ວ
ພວກເຂົາໄດ້ຮູ້ກັນວ່າພໍ່ໄດ້ໃຊ້ລູກມາອີຫລີ
17:26 ບັດນີ້ລູກໄດ້ເປີດເຜີຍພຣະນາມຂອງພໍ່ໃຫ້ພວກເຂົາຮູ້ຈັກຢູ່ ແລ້ວຊິເປີດເຜີຍ
ໃຫ້ຮູ້ຈັກອີກຕໍ່ໄປ ເພື່ອວ່າຄວາມຮັກແພງທີ່ພໍ່ມີຕໍ່ລູກ ຊິໄດ້ສະຖິດຢູ່ໃນພວກເຂົາ
ແລ້ວລູກກໍຊິໄດ້ສະຖິດຢູ່ໃນພວກເຂົານໍາ ອາເມນ”

# ໂຢຮັນ ບົດທີ 18

18:1 ພໍເວົ້າແນວນີ້ແລ້ວ ເພິ່ນເລີຍພາລູກສິດຂ້າມນໍ້າ ກິດໂຣນ ໄປເຂົ້າສວນໝ້ອງ
ໜຶ່ງກັບລູກສິດຂອງເພິ່ນ
18:2 ແລ້ວ ຢູດາ ຜູ້ທີ່ຊິທໍລະຍົດໃສ່ ພຣະເຢຊູ ເຂົາກໍຮູ້ຈັກສວນໝ້ອງນີ້ດີ ຍ້ອນວ່າ
ພຣະເຢຊູ ເຄີຍພາລູກສິດມາໂຮມກັນໃນສວນໝ້ອງນີ້ຢູ່ເລື້ອຍ
18:3 ບັດນີ້ ຢູດາ ໄດ້ນໍາກອງທະຫານໂຣມທີ່ໄດ້ຮັບມອບມາ ພ້ອມກັບພວກຍາມ
ຮັກສາການປະຈໍາວິຫານທີ່ພວກເຈົ້າໜ້າທີ່ມາຈາກຫົວໜ້າປະໂລຫິດສົ່ງໄປ ພ້ອມ
ກັບພວກຄະນະ ຟາຣີຊາຍ ໄດ້ພາກັນຖືຕະກຽງຖືກະບອງເອົາເຄື່ອງອາວຸດຕ່າງໆ
ໄປສວນນັ້ນ
18:4 ສ່ວນ ພຣະເຢຊູ ເພິ່ນຮູ້ຈັກໝົດທຸ່ແນວທີ່ຊິເກີດຂຶ້ນກັບເພິ່ນ ຈັ່ງຍ່າງໄປຫາ
ເຂົາ ແລ້ວຖາມວ່າ “ພວກເຈົ້າພາກັນມາຫາໃຜ”
18:5 ພວກເຂົາຕອບເພິ່ນວ່າ “ມາຫາ ເຢຊູ ໄທບ້ານ ນາຊາເຣັດ ” ພຣະເຢຊູ ບອກ
ພວກເຂົາວ່າ “ເອີ້ ເຮົານີ້ເນາະ” (ສ່ວນ ຢູດາ ຜູ້ທໍລະຍົດໃສ່ ພຣະເຢຊູ ນັ້ນກໍຢືນຢູ່
ຮ່ວມກັບພວກເຂົາ)
18:6 ບັດພໍ ພຣະເຢຊູ ໄດ້ບອກພວກເຂົາວ່າ “ເຮົານີ້ເນາະ” ພວກເຂົາກໍເລີຍສະເດີດ
ແລ້ວລົ້ມລົງພື້ນດິນ
18:7 ບັດນີ້ ພຣະເຢຊູ ຖາມພວກເຂົາຊໍ້າອີກວ່າ “ພວກເຈົ້າມາຫາໃຜ” ພວກເຂົາຈັ່ງ
ຕອບວ່າ “ມາຫາ ເຢຊູ ໄທບ້ານ ນາຊາເຣັດ ”
18:8 ພຣະເຢຊູ ເວົ້າວ່າ “ເຮົາບອກພວກເຈົ້າແລ້ວ ວ່າເຮົານີ້ເນາະ ຜູ້ທີ່ພວກເຈົ້າ
ພວມຫາ ຈັ່ງຊັ້ນ ຄັນພວກເຈົ້າມາຫາເຮົາກໍໃຫ້ປ່ອຍຄົນພວກນີ້ໄປຊະ”
18:9 (ເພິ່ນເວົ້າຈັ່ງຊີ້ ເພື່ອຊິໃຫ້ເປັນໄປຕາມຄໍາທີ່ເວົ້າວ່າ “ສ່ວນຄົນທີ່ພຣະເຈົ້າໄດ້
ມອບໄວ້ໃຫ້ຜູ້ຂ້ານັ້ນ ບໍ່ໄດ້ຫລົງຫາຍໄປຈັກຄົນ”)
18:10 ບັດນີ້ ຊີໂມນເປໂຕ ຜູ້ທີ່ຖືດາບມານໍາ ລາວກໍຊັກດາບອອກມາແຂ້ວຫູຂວາ
ຄົນໃຊ້ຂອງມະຫາປະໂລຫິດຂາດໄປ (ຄົນໃຊ້ຜູ້ຫູຂາດຊື່ວ່າ ມາລະໂຂ )
18:11 ພຣະເຢຊູ ເລີຍບອກ ເປໂຕ ວ່າ “ເອົາດາບເຈົ້າໃສ່ຝັກໄວ້ເນາະແມະ ຄືເຮົາຊິ
ບໍ່ດື່ມບໍ້ ຈອກທີ່ພຣະເຈົ້າຜູ້ເປັນພໍ່ໄດ້ກຽມໄວ້ໃຫ້ເຮົາຮັບດື່ມນັ້ນ”

18:12 ບັດນີ້ ກອງທະຫານ ນາຍພັນທະຫານ ກັບພວກຍາມຮັກສາການປະຈຳວິ-
ຫານຂອງພວກຢິວ ຈັ່ງພ້ອມກັນຈັບກຸມມັດ ພຣະເຢຊູ ໄວ້
18:13 ແລ້ວພວກເຂົາໄດ້ນຳ ພຣະເຢຊູ ໄປຫາ ນາຍ ອັນນາ ກ່ອນ ຍ້ອນວ່າ ອັນນາ
ເປັນພໍ່ເຖົ້າຂອງ ກາຢະຟາ ຜູ້ເປັນມະຫາປະໂລຫິດປະຈຳການປີນັ້ນ
18:14 ແມ່ນ ກາຢະຟາ ຜູ້ນີ້ເນາະ ທີ່ເຄີຍແນະນຳພວກຢິວວ່າມັນເປັນການດີທີ່ຊິ
ໃຫ້ຄົນຜູ້ດຽວເປັນແບ້ຮັບບາບຕາຍແທນຊົນຊາດ *(ໃຫ້ເບິ່ງ ໂຢຮັນ 11:49-51)*
18:15 ບັດນີ້ ຊີໂມນ ທີ່ເອີ້ນກັນວ່າ ເປໂຕ ໄດ້ຕາມຫລັງ ພຣະເຢຊູ ໄປ ແລ້ວກໍມີ
ລູກສິດອີກຜູ້ໜຶ່ງໄປນຳ ມະຫາປະໂລຫິດໄດ້ຮູ້ຈັກລູກສິດຜູ້ນີ້ ເຂົາເລີຍໄປກັບ
ພຣະເຢຊູ ເຂົ້າໃນເດີ່ນບ້ານຂອງມະຫາປະໂລຫິດນັ້ນ
18:16 ແຕ່ ເປໂຕ ຍັງຢືນຢູ່ນອກປະຕູ ສ່ວນລູກສິດທີ່ຮູ້ຈັກກັນກັບມະຫາປະໂລຫິດ
ເລີຍອອກໄປບອກກັບຍິງຜູ້ເປັນຍາມເຝົ້າປະຕູນັ້ນ ແລ້ວຈັ່ງພາ ເປໂຕ ເຂົ້າມາ
ຂ້າງໃນ
18:17 ແລ້ວແມ່ຍິງຄົນທີ່ເປັນຍາມເຝົ້າປະຕູນັ້ນໄດ້ຖາມ ເປໂຕ ວ່າ “ບໍ່ແມ່ນເຈົ້າເປັນ
ລູກສິດຂອງ ພຣະເຢຊູ ນຳບໍ້” ເປໂຕ ປະຕິເສດເຂົາວ່າ “ຂ້ອຍບໍ່ໄດ້ເປັນ”
18:18 ບັດນີ້ ພວກຄົນໃຊ້ກັບພວກຍາມຮັກສາການປະຈຳວິຫານໄດ້ດັງໄຟອົບອຸ່ນ
ຍ້ອນວ່າອາກາດໜາວ ແລ້ວ ເປໂຕ ກໍຢືນອົບອຸ່ນຢູ່ໄຟກັບພວກເຂົາ
18:19 ຫວ່າງນັ້ນ ມະຫາປະໂລຫິດພວມສອບຖາມ ພຣະເຢຊູ ເຖິງລູກສິດກັບຫລັກ-
ຄຳສອນຂອງເພິ່ນ
18:20 ພຣະເຢຊູ ຕອບ ລາວ ວ່າ “ເຮົາໄດ້ເວົ້າກັບໂລກຢ່າງເປີດເຜີຍ ເຮົາເຄີຍສອນ
ໃນສາລາທຳກັບໃນວິຫານທີ່ພວກຢິວປະຊຸມກັນປະຈຳ ແລ້ວເຮົາບໍ່ເຄີຍເວົ້າປິດ-
ບັງອີຫຍັງເປັນຄວາມລັບເລີຍ
18:21 ເຈົ້າສອບຖາມເຮົາຍ້ອນຫຍັງ ໃຫ້ໄປຖາມຄົນທີ່ເຄີຍໄດ້ຮັບຟັງເຮົາ ວ່າເຮົາ
ເຄີຍບອກສອນເຂົາຈັ່ງໃດ ນີ້ແຫລະ ພວກເຂົາຮູ້ຈັກດີວ່າເຮົາໄດ້ເວົ້າຈັ່ງໃດ”
18:22 ແຕ່ພໍ ພຣະເຢຊູ ເວົ້າຈັ່ງຊັ້ນແລ້ວ ມີຍາມຮັກສາການປະຈຳວິຫານຜູ້ໜຶ່ງກໍ
ເອົາຝ່າມືຕົບໃສ່ ພຣະເຢຊູ ເວົ້າວ່າ “ຮວ້າຍ ໂຕຄືຕອບມະຫາປະໂລຫິດແນວນີ້”

18:23 ພຣະເຢຊູ ເລີຍຕອບເຂົາວ່າ "ຄັນວ່າເຮົາໄດ້ເວົ້າແນວບໍ່ແມ່ນ ກໍໃຫ້ເປັນຫຼັກ-
ຖານພະຍານມາໃນແນວບໍ່ແມ່ນນັ້ນ ແຕ່ຄັນວ່າເຮົາໄດ້ເວົ້າແນວແມ່ນແລ້ວ ເປັນ
ຫຍັງເຈົ້າຈັ່ງຕົບໜ້າເຮົາ"
18:24 (ຫວ່າງນັ້ນ ອັນນາ ໄດ້ສົ່ງ ພຣະເຢຊູ ຊຶ່ງຖືກມັດໄວ້ນັ້ນ ໄປຫາ ກາຍະຟາ
ມະຫາປະໂລຫິດແລ້ວ)
18:25 ໃນຕອນນັ້ນ ຊີໂມນເປໂຕ ຢືນອົບອຸ່ນຢູ່ໄຟເດີ່ນນັ້ນ ພວກຄົນຢູ່ຫັ້ນໄດ້ຖາມ-
ລາວວ່າ "ເຈົ້າບໍ່ແມ່ນເປັນລູກສິດຂອງຜູ້ນັ້ນບໍ້" ເປໂຕ ປະຕິເສດວ່າ "ຂ້ອຍບໍ່ໄດ້
ເປັນ"
18:26 ຄົນໃຊ້ຜູ້ໜຶ່ງຂອງມະຫາປະໂລຫິດ ຊຶ່ງເປັນພີ່ນ້ອງກັນກັບຄົນທີ່ ເປໂຕ ໄດ້
ແຂ້ວຫູຂາດນັ້ນເລີຍເວົ້າວ່າ "ບໍ່ແມ່ນຂ້ອຍເຫັນເຈົ້າຢູ່ໃນສວນກັບຜູ້ນັ້ນບໍ້"
18:27 ບັດນີ້ ເປໂຕ ໄດ້ປະຕິເສດອີກ ແລ້ວໃນຕອນນັ້ນມີໄກ່ໂຕໜຶ່ງຂັນພໍດີ
18:28 ບັດນີ້ ພວກເຂົາໄດ້ພາ ພຣະເຢຊູ ອອກຈາກເຮືອນຂອງ ກາຍະຟາ ໄປຫາ
ປີລາດ ຢູ່ໂຮງພັກຮັກສາການຂອງທະຫານໂຣມແຕ່ເດິກ ແຕ່ສ່ວນຫົວໜ້າພວກ-
ຢິວບໍ່ໄດ້ເຂົ້າໄປໃນນັ້ນນຳ ຍ້ອນພວກເຂົາຢ້ານວ່າຊິເປັນມົນທິນ ຈັ່ງຊິບໍ່ໄດ້ຮ່ວມ
ກິນລ້ຽງໃນງານສະຫລອງມື້ພຣະເຈົ້າໄດ້ກູ້ຊາດ ຢິວ
18:29 ປີລາດ ອອກມາຫາພວກເຂົາແລ້ວຖາມວ່າ "ພວກເຈົ້າມີຄະດີອີຫຍັງຈັ່ງມາ
ຟ້ອງຮ້ອງຜູ້ຊາຍຜູ້ນີ້"
18:30 ພວກເຂົາຕອບ ປີລາດ ວ່າ "ຄັນຄົນຜູ້ນີ້ບໍ່ມີຄວາມຜິດ ພວກເຮົາຄືຊິບໍ່ໄດ້ພາ
ເຂົາມາມອບສົ່ງໃຫ້ທ່ານ"
18:31 ບັດນີ້ ປີລາດ ຕອບພວກເຂົາວ່າ "ໃຫ້ພວກເຈົ້ານຳເຂົາໄປຕັດສິນເອົາຕາມ
ກົດບັນຍັດຂອງພວກເຈົ້າເອງເດີ້" ຈັ່ງຊັ້ນ ຫົວໜ້າພວກຢິວໄດ້ຕອບ ປີລາດ ວ່າ
"ກົດໝາຍ ໂຣມ ຫ້າມ ບໍ່ໃຫ້ພວກເຮົາມີສິດປະຫານຄົນ"
18:32 (ພວກເຂົາໄດ້ເວົ້າຈັ່ງຊີ້ ເພື່ອເປັນໄປຕາມຖ້ອຍຄຳຂອງ ພຣະເຢຊູ ເຖິງການ
ຕາຍຂອງເພິ່ນທີ່ວ່າຊິຕາຍແບບໃດ)
18:33 ບັດນີ້ ປີລາດ ໄດ້ກັບເຂົ້າໄປໃນໂຮງພັກຮັກສາການຂອງທະຫານໂຣມອີກ
ແລ້ວເອີ້ນຖາມ ພຣະເຢຊູ ວ່າ "ເຈົ້າເປັນກະສັດຂອງພວກຢິວບໍ່"

18:34 ພຣະເຢຊູ ຕອບ ປີລາດ ວ່າ "ເຈົ້າຖາມຢາກຮູ້ຈັກເອົາເອງບໍ້ ຫລືໄດ້ມີຄົນອື່ນ
ມາບອກເຈົ້າໃນເລື່ອງນີ້ກ່ຽວກັບເຮົານີ້"
18:35 ປີລາດ ຕອບວ່າ "ເຮົານີ້ບໍ່ແມ່ນຄົນ ຢິວ  ແມ່ນບໍ່ ຄື ຊາວຢິວ ຂອງເຈົ້າ ຄືພວກ
ຫົວໜ້າປະໂລຫິດໄດ້ນຳເຈົ້າມາມອບສົ່ງໃຫ້ເຮົາ ເຈົ້າໄດ້ເຮັດອີຫຍັງຜິດແໜ່"
18:36 ພຣະເຢຊູ ຕອບວ່າ "ລາຊະອານາຈັກຂອງເຮາບໍ່ໄດ້ຢູ່ຝ່າຍໂລກນີ້ ຄັ່ນແມ່ນ
ລາຊະອານາຈັກຂອງເຮາຢູ່ຝ່າຍໂລກນີ້ ກອງອົງຄະຮັກຂອງເຮົາຊິລົງມືສູ້ ບໍ່ໃຫ້
ເຮົາຖືກມອບໄວ້ກັບພວກຢິວແນວນີ້ ແຕ່ບັດນີ້ລາຊະອານາຈັກຂອງເຮາບໍ່ໄດ້ມາ
ຈາກໂລກນີ້"
18:37 ປີລາດ ເລີຍເວົ້ານຳ ພຣະເຢຊູ ວ່າ "ເຈົ້າເປັນກະສັດແລ້ວ ແມ່ນບໍ່"  ພຣະເຢ-
ຊູ ຕອບວ່າ "ທີ່ເຈົ້າເວົ້າວ່າ ເຮົາເປັນກະສັດກໍແມ່ນ ແລ້ວເຮົາໄດ້ເຂົ້າມາໃນໂລກ
ຍ້ອນເຫດນີ້ເນາະ ກໍເພື່ອເປັນຫຼັກຖານພະຍານເຖິງຄວາມເປັນຈິງ ແລ້ວຄູ່ຄົນທີ່ຢູ່
ຝ່າຍຄວາມຈິງກໍຊິໄດ້ຮັບຟັງສຽງຂອງເຮົາ"
18:38 ບັດນີ້  ປີລາດ ຈັ່ງຖາມ ພຣະເຢຊູ ກວ່າ "ຄວາມຈິງຄືອີຫຍັງ" ພໍເວົ້າແລ້ວ ປີ-
ລາດ ກໍເລີຍອອກໄປຫາພວກຜູ້ນຳຂອງພວກຢິວ ເວົ້າກັບເຂົາວ່າ "ເຮົາບໍ່ເຫັນ
ຄວາມຜິດອີຫຍັງຈັກແນວໃນຜູ້ນີ້ເລີຍ
18:39 ແຕ່ວ່າ ຕາມທຳນຽມຂອງພວກເຈົ້າ ເຮົາຊິປ່ອຍນັກໂທດຄົນໜຶ່ງໃນງານສະ-
ຫລອງກູ້ຊາດຂອງພວກເຈົ້າ  ຈັ່ງຊັ້ນພວກເຈົ້າຢາກໃຫ້ເຮົາປ່ອຍກະສັດຂອງ
ພວກຢິວຜູ້ນີ້ໃຫ້ພວກເຈົ້າບໍ່"
18:40 ບັດນີ້ ພວກເຂົາກໍພາກັນຮ້ອງຂຶ້ນວ່າ "ຢ່າປ່ອຍຜູ້ຊາຍຜູ້ນີ້ເດີ້ ໃຫ້ປ່ອຍ ບາ-
ຣາບາ " (ຊຶ່ງ ບາຣາບາ ນັ້ນເປັນໂຈນ)

## ໂຢຮັນ ບົດທີ 19

19:1 ໃນຕອນນັ້ນ  ປີລາດ ເລີຍສັ່ງໃຫ້ນຳເອົາ ພຣະເຢຊູ ໄປຄ້ຽນຕີ
19:2 ແລ້ວພວກທະຫານ ໂຣມ ໄດ້ເອົາໜາມສານເປັນພວງມາໄລມາສຸບໃສ່ຫົວ
ຂອງ ພຣະເຢຊູ ເປັນມົງກຸດ ແລ້ວກໍເອົາຜ້າສີມ່ວງມາຄຸມໃສ່ ພຣະເຢຊູ
19:3 ແລ້ວພວກເຂົາກໍເວົ້າເຍາະເຍີ້ຍໃສ່ ພຣະເຢຊູ ວ່າ "ຂໍໃຫ້ກະສັດຂອງພວກຢິວ
ຊົງພຣະຈະເລີນເດີ້" ແລ້ວກໍເອົາມືຕົບຕີ ພຣະເຢຊູ

19:4 ແຕ່ສ່ວນ ປີລາດ ລາວກໍອອກໄປນອກອີກ ໄປເວົ້າກັບພວກຫົວໜ້າ ຢິວ ວ່າ
“ນີ້ແຫລະ ເຮົາຊິນຳຜູ້ນີ້ອອກມາມອບສົ່ງຄືນພວກເຈົ້າເດີ້ ເພື່ອໃຫ້ພວກເຈົ້າຮູ້ວ່າ
ເຮົາບໍ່ເຫັນວ່າຄົນຜູ້ນີ້ມີຄວາມຜິດອີຫຍັງເລີຍ”
19:5 ບັດນີ້ ພຣະເຢຊູ ກໍອອກມາ ສວມມົງກຸດໜາມ ພ້ອມກັບຜ້າຄຸມສີມ່ວງ ແລ້ວ
ປີລາດ ກໍເວົ້າໃຫ້ພວກຫົວໜ້າ ຢິວ ວ່າ “ນີ້ແຫລະ ເບິ່ງເດີ້ ຜູ້ຊາຍຜູ້ນີ້”
19:6 ບັດນີ້ ພໍພວກຫົວໜ້າປະໂລຫິດກັບພວກຍາມຮັກສາການປະຈຳວິຫານເຫັນ
ພຣະເຢຊູ ພວກເຂົາກໍພາກັນຮ້ອງວ່າ “ເອົາໄປປະຫານໆ” ປີລາດ ກໍເວົ້າວ່າ “ໃຫ້
ພວກເຈົ້າເອົາໄປປະຫານເອງຊະ ສ່ວນເຮົາເອງກໍບໍ່ເຫັນວ່າຄົນຜູ້ນີ້ມີຄວາມຜິດ
ອີຫຍັງເລີຍ”
19:7 ແລ້ວພວກຄົນ ຢິວ ນັ້ນຕອບ ປີລາດ ວ່າ “ພວກເຮົາມີກົດໝາຍ ແລ້ວຕາມກົດ-
ໝາຍຂອງພວກເຮົາ ຄົນຜູ້ນີ້ສົມຄວນທີ່ຊິຕາຍ ຍ້ອນເຂົາໄດ້ຕັ້ງໂຕເອງໄວ້ວ່າເປັນ
ພຣະບຸດ ຂອງພຣະເຈົ້າ”
19:8 ພໍ ປີລາດ ໄດ້ຍິນຈັ່ງຊັ້ນ ລາວ ຕົກໃຈຢ້ານແຮງຫລາຍ
19:9 ແລ້ວ ລາວ ເລີຍກັບໄປໃນໂຮງພັກທະຫານອີກ ແລ້ວຈັ່ງຖາມ ພຣະເຢຊູ ວ່າ
“ເຈົ້າມາແຕ່ໃສ” ແຕ່ວ່າ ພຣະເຢຊູ ບໍ່ໄດ້ຕອບອີຫຍັງ ລາວ ເລີຍ
19:10 ບັດນີ້ ປີລາດ ຈັ່ງຖາມເພິ່ນວ່າ “ເຈົ້າຄືບໍ່ຍອມເວົ້ານຳເຮົາ ເຈົ້າບໍ່ຮູ້ບໍ້ ວ່າຂ້ອຍ
ມີອຳນາດສັ່ງຄືງປະຫານຊີວິດເຈົ້າ ກັບມີອຳນາດທີ່ຊິປ່ອຍເຈົ້າໄປໄດ້”
19:11 ພຣະເຢຊູ ຕອບວ່າ “ເຈົ້າບໍ່ມີອຳນາດເໜືອເຮົາດອກ ນອກຈາກໄດ້ຮັບຈາກຜູ້
ຢູ່ເບື້ອງເທິງພຸ້ນເນາະ ຈັ່ງຊັ້ນຄົນທີ່ຈັບເຮົາມາມອບໃຫ້ເຈົ້າຈັ່ງມີຄວາມຜິດແຮງ
ຫລາຍກວ່າເຈົ້າ”
19:12 ຕັ້ງແຕ່ນັ້ນມາ ປີລາດ ກໍແຮງຕັ້ງໃຈພະຍາຍາມປ່ອຍ ພຣະເຢຊູ ໄປ ແຕ່
ພວກຜູ້ນຳ ຢິວ ກໍຮ້ອງສຽງດັ່ງຂຶ້ນອີກວ່າ “ຄັນເຈົ້າປ່ອຍຄົນຜູ້ນີ້ ກໍສະແດງວ່າເຈົ້າ
ບໍ່ໄດ້ເປັນໝູ່ເປັນມິດກັບຈັກກະພັດ ກາຍຊາ ຄືໃຜກໍຕາມທີ່ອ້າງໂຕວ່າເປັນກະສັດ
ກໍຕັ້ງໂຕວ່າເປັນຄູ່ອາຄາດກັນກັບ ກາຍຊາ ແລ້ວ
19:13 ບັດພໍໄດ້ຍິນຈັ່ງຊັ້ນ ປີລາດ ໄດ້ນຳ ພຣະເຢຊູ ອອກມາ ແລ້ວໄດ້ນັ່ງບັນລັງໃຫ້
ການຕັດສິນ ທີ່ເອີ້ນກັນວ່າ ‘ລານປູຫີນ’ (ພາສາເຮັບເຣີເອີ້ນວ່າ ‘ຄັບບາທາ’)

19:14 ຕອນນັ້ນກໍເປັນມື້ກຽມງານສະຫລອງມື້ພຣະເຈົ້າກູ້ຊາດຂອງພວກຢິວເປັນ
ເວລາປະມານ ທ່ຽງ ສ່ວນ ປີລາດ ເວົ້າກັບພວກຫົວໜ້າ ຢິວ ວ່າ 'ນີ້ແຫລະ ກະສັດ
ຂອງພວກເຈົ້າເດີ້'
19:15 ແຕ່ວ່າພວກເຂົາກໍຮ້ອງວ່າ ເອົາໄປ ໂລດ ໆເອົາມັນໄປຄຶງໃສ່ໄມ້ກາງແຂນ
ໂລດ " ປີລາດ ກໍຖາມວ່າ "ຊິໃຫ້ເຮົາຄຶງກະສັດພວກເຈົ້າໃສ່ໄມ້ກາງແຂນຕີ້" ພວກ
ຫົວໜ້າປະໂລຫິດກໍຕອບ ປີລາດ ວ່າ "ພວກເຮົາບໍ່ມີກະສັດອື່ນນອກຈາກຈັກກະ-
ພັດ ກາຍຊາ "
19:16 ບັດນີ້ ປີລາດ ກໍເລີຍມອບເອົາ ພຣະເຢຊູ ໄວ້ໃຫ້ກັບພວກເຂົາໃຫ້ເອົາໄປຄຶງ
ແລ້ວພວກເຂົາຈັ່ງນຳເອົາ ພຣະເຢຊູ ອອກໄປ
19:17 ແລ້ວ ພຣະເຢຊູ ແບກໄມ້ກາງແຂນອອກໄປຂຶ້ນໂນນໜ້ອງໜຶ່ງທີ່ເອີ້ນກັນວ່າ
"ກະໂຫລກຫົວ" (ຊຶ່ງພາສາເຮັບເຣີເອີ້ນວ່າ " ໂຄລະໂຄທາ ")
19:18 ພວກເຂົາຈັ່ງຄຶງ ພຣະເຢຊູ ຢູ່ໂນນນັ້ນ ແລ້ວກໍມີຜູ້ຊາຍອີກສອງຄົນ ຖືກຄຶງ
ຄົນລະຂ້າງກັບ ພຣະເຢຊູ ແລ້ວສ່ວນ ພຣະເຢຊູ ກໍຢູ່ລະຫວ່າງກາງ
19:19 ບັດນີ້ ປີລາດ ໄດ້ຂຽນທາຕິດໄວ້ເທິງໄມ້ກາງແຂນນັ້ນ ໄດ້ຈາລຶກໄວ້ວ່າ " ເຢຊູ
ໄທບ້ານ ນາຊາເຣັດ ກະສັດຂອງຊົນຊາດ ຢິວ "
19:20 ແລ້ວມີຄົນ ຢິວ ຫລວງຫລາຍໄດ້ອ່ານທານັ້ນ ຍ້ອນວ່າໜ້ອງທີ່ ພຣະເຢຊູ ຖືກ
ຄຶງປະຫານນັ້ນຢູ່ໃກ້ເມືອງ ສ່ວນທານັ້ນ ໄດ້ຈາລຶກເປັນພາສາເຮັບເຣີ ພາສາເກ-
ຣັກ ກັບພາສາ ລາຕິນ ນຳ
19:21 ຈັ່ງຊັ້ນ ພວກຫົວໜ້າປະໂລຫິດຂອງພວກຢິວຂໍກັບ ປີລາດ ວ່າ "ຢ່າຈາລຶກວ່າ
'ກະສັດຂອງຊົນຊາດ ຢິວ ' ແຕ່ໃຫ້ຈາລຶກວ່າ 'ຜູ້ຊາຍຜູ້ນີ້ອ້າງໂຕວ່າເປັນກະສັດ
ຂອງຊົນຊາດ ຢິວ '"
19:22 ປີລາດ ເລີຍຕອບວ່າ "ແນວທີ່ເຮົາຈາລຶກນັ້ນ ກໍໄດ້ຈາລຶກໄວ້ແລ້ວ"
19:23 ບັດນີ້ ພວກທະຫານທີ່ໄດ້ຄຶງ ພຣະເຢຊູ ໄວ້ເທິງໄມ້ກາງແຂນນັ້ນ ໄດ້ເອົາ
ເສື້ອຜ້າຂອງເພິ່ນມາແຍກກອງກັນໄວ້ເປັນສີ່ກອງ ແຈກກັນຄົນລະກອງພ້ອມກັບ
ເສື້ອຄຸມຂອງເພິ່ນ ແຕ່ສ່ວນເສື້ອຄຸມນີ້ມັນບໍ່ມີຮອຍຫຍິບຮອຍຕໍ່ ເປັນຜືນດຽວ ຖັກ
ຈາກເທິງລົງມາລຸ່ມ

19:24 ພວກເຂົາຈັ່ງເວົ້າກັນວ່າ “ຕົກລົງພວກເຮົາບໍ່ຈີກແບ່ງເສື້ອໂຕນີ້ກັນເນາະ ແຕ່
ໃຫ້ພວກເຮົາຈັບສະຫລາກວ່າໃຜຊິໄດ້ເສື້ອໂຕນີ້” ພວກທະຫານໄດ້ເຮັດຈັ່ງຊີ້ກໍ
ເພື່ອເປັນໄປຕາມ ພຣະຄໍາ ທີ່ກ່າວໄວ້ວ່າ “ພວກເຂົາພາກັນແບ່ງປັນເສື້ອຜ້າຂອງ
ເຮົາ ແລ້ວສ່ວນເສື້ອຄຸມເຮົາເຂົາກໍຈັບສະຫລາກ”
19:25 ຕອນນັ້ນ ແມ່ກັບນ້າສາວຂອງ ພຣະເຢຊູ ກັບ ມາຣີອາ ເມຍຂອງ ກະໂລປາ
ແລ້ວກໍ ມາຣີອາ ໄທມັກດາລາ ໄດ້ຢືນຢູ່ຂ້າງໄມ້ກາງແຂນເພິ່ນ
19:26 ບັດ ພຣະເຢຊູ ຫລຽວເຫັນແມ່ຂອງເພິ່ນກັບລູກສິດຜູ້ທີ່ເພິ່ນຮັກແພງຢືນຢູ່ນັ້ນ
ນໍາ ພຣະເຢຊູ ກໍໄດ້ບອກແມ່ວ່າ “ແມ່ເອີຍ ນີ້ແຫລະ ລູກຊາຍຂອງເຈົ້າ”
19:27 ແລ້ວ ພຣະເຢຊູ ໄດ້ເວົ້າກັບລູກສິດຄົນນັ້ນວ່າ “ນີ້ແຫລະ ແມ່ຂອງເຈົ້າ” ຕັ້ງ
ແຕ່ນັ້ນມາລູກສິດຜູ້ນັ້ນກໍໃຫ້ ມາຣີອາ ໄປອາໄສຢູ່ບ້ານຂອງເຂົານໍາ
19:28 ຫລັງຈາກນັ້ນມາ ເພິ່ນຮູ້ຈັກວ່າ ຄູ່ອັນຄູ່ແນວໄດ້ເຮັດສໍາເລັດແລ້ວ ເພື່ອຊິໃຫ້-
ເປັນໄປຕາມຂໍ້ທີ່ກ່າວໄວ້ໃນ ພຣະຄໍາ ພຣະເຢຊູ ຈັ່ງເວົ້າວ່າ “ເຮົາຢາກກິນນໍ້າ”
19:29 ແລ້ວແຖວນັ້ນມີຂັນໃສ່ເຫລົ້າອະງຸ່ນສົ້ມວາງໄວ້ຢູ່ ທະຫານກໍໄດ້ເອົາຟອງນໍ້າ
ໄປຈຸ່ມເຫລົ້າອະງຸ່ນນັ້ນ ແລ້ວເອົາສຽບໃສ່ປາຍກ້ານໄມ້ໃບຫູສິບ ເອົາຂຶ້ນທີ່ປາກ
ພຣະເຢຊູ
19:30 ບັດ ພຣະເຢຊູ ຮັບເອົາເຫລົ້າອະງຸ່ນສົ້ມແລ້ວ ເພິ່ນກໍເວົ້າວ່າ “ໄດ້ສໍາເລັດ
ແລ້ວ” ແລ້ວເພິ່ນໄດ້ກົ້ມໜ້າລົງ ປ່ອຍຈິດວິນຍານຂອງເພິ່ນໃຫ້ອອກຈາກຮ່າງໄປ
19:31 ມື້ນັ້ນເປັນມື້ກຽມງານສະຫລອງມື້ພຣະເຈົ້າກູ້ຊາດຂອງພວກຢິວ ແລ້ວເພື່ອ
ສົບຂອງຜູ້ຕາຍຊິບໍ່ໄດ້ຖືກຫ້ອຍໄວ້ເທິງໄມ້ກາງແຂນຂ້າມຄືນໃນວັນຊະບາໂຕ (ມື້
ຢຸດພັກງານຂອງພວກຢິວນັ້ນ) ພວກຜູ້ນໍາ ຢິວ ຈັ່ງໄດ້ຂໍກັບ ປີລາດ ໃຫ້ທຸບຂາຂອງ
ຄົນທີ່ຖືກຄຶງປະຫານແລ້ວນັ້ນ ເພື່ອຊິໄດ້ເອົາສົບລົງມາຈາກໄມ້ກາງແຂນອອກໄປ
19:32 ຈັ່ງຊັ້ນ ພວກທະຫານຈັ່ງໄດ້ມາທຸບຂາຂອງຜູ້ຊາຍຄົນແຮກ ກັບຜູ້ຊາຍຄົນ
ອື່ນນັ້ນທີ່ຖືກຄຶງຢູ່ຂ້າງ ພຣະເຢຊູ ໃຫ້ຫັກ
19:33 ແຕ່ພໍມາຮອດ ພຣະເຢຊູ ເຂົາບໍ່ໄດ້ທຸບຂາຂອງເພິ່ນ ຍ້ອນເຫັນວ່າເພິ່ນໄດ້
ຕາຍໄປແລ້ວ

19:34 ແຕ່ທະຫານຄົນໜຶ່ງໄດ້ເອົາຫອກມາແທງໃສ່ສີຂ້າງ ພຣະເຢຊູ ພໍແທງແລ້ວ
ເລືອດກັບນໍ້າກໍໄຫລອອກມາທັນທີ
19:35 ແລ້ວຜູ້ນັ້ນທີ່ເຫັນເຫດການນີ້ໄດ້ເປັນພະຍານ ແລ້ວຄຳພະຍານຂອງເຂົາ
ເປັນຄວາມຈິງ ແລ້ວເຂົາເອງຢືນຢັນວ່າເຂົາໄດ້ເວົ້າຄວາມຈິງ ນີ້ກໍເພື່ອເຈົ້າຊິໄດ້
ເຊື່ອ
19:36 ຄືວ່າ ເຫດການແນວໝູ່ນີ້ໄດ້ເກີດຂຶ້ນເພື່ອໃຫ້ເປັນໄປຕາມຂໍ້ ພຣະຄຳ ທີ່ວ່າ
"ກະດູກຂອງເພິ່ນຊິບໍ່ຖືກຫຸບຫັກຈັກອັນ"
19:37 ແລ້ວມີ ພຣະຄຳ ອີກຂໍ້ໜຶ່ງທີ່ວ່າ "ພວກເຂົາຊິຢືນເບິ່ງຜູ້ທີ່ເຂົາແທງ"
19:38 ຫລັງຈາກນັ້ນ ນາຍ ໂຢເຊບ ຜູ້ເປັນໄທເມືອງ ອາຣິມາທາຍ (ຊຶ່ງ ລາວ ເປັນ
ລູກສິດລັບໆ ຂອງ ພຣະເຢຊູ ຍ້ອນຢ້ານພວກຢິວ) ໄດ້ໄປຂໍເອົາສົບ ພຣະເຢຊູ
ຈາກ ປີລາດ ສ່ວນ ປີລາດ ເລີຍອະນຸຍາດໃຫ້ ລາວ ເລີຍເອົາສົບຂອງ ພຣະເຢຊູ
ມາ
19:39 ແລ້ວ ນີໂກເດມ (ຊຶ່ງແຕ່ກ່ອນເຄີຍໄປຫາ ພຣະເຢຊູ ຍາມກາງຄືນ) ໄດ້ໄປ
ພ້ອມ ໂຢເຊບ ແລ້ວ ລາວ ໄດ້ເອົາເຄື່ອງຫອມບົດໄປນຳ ຄືຢາງໄມ້ຫອມປະສົມ
ກັບຫາງແຂ້ ນໍ້າໜັກປະມານສາມສິບສີ່ກິໂລ
19:40 ແລ້ວສອງຄົນນີ້ ໄດ້ເອົາສົບຂອງ ພຣະເຢຊູ ພັນຜ້າປ່ານລີນິນຂາວລະອຽດ
ພ້ອມໃສ່ເຄື່ອງຫອມບົດ ພັນໃສ່ສົບຂອງ ພຣະເຢຊູ ຕາມປະເພນີການມ້ຽນສົບ
ຂອງພວກຢິວ
19:41 ບັດນີ້ ໃນໜ້ອງທີ່ ພຣະເຢຊູ ຖືກຄຶງປະຫານນັ້ນ ກໍມີສວນໜ້ອງໜຶ່ງ ແລ້ວໃນ
ສວນນັ້ນ ມີອຸບໂມງໃໝ່ ຍັງບໍ່ເຄີຍມີສົບຂອງຜູ້ໃດໄປມ້ຽນໄວ້ເລີຍ
19:42 ເຂົາເລີຍເອົາສົບ ພຣະເຢຊູ ໄປມ້ຽນໄວ້ໃນອຸບໂມງນັ້ນ ຍ້ອນວ່າມັນຢູ່ໃກ້ຄຽງ
ຄືໃກ້ຊິຮອດມື້ກຽມງານສະຫລອງມື້ພຣະເຈົ້າກູ້ຊາດຂອງພວກຢິວຢູ່ແລ້ວ *(ໃຫ້
ເບິ່ງ ໂຢຮັນ 19:14 ກັບ 19:31)*

# ໂຢຮັນ ບົດທີ 20

20:1 ຢູ່ຕໍ່ມາ ໃນມື້ແຮກຂອງອາທິດ (ຄືມື້ອາທິດ) ນາງ ມາຣີອາ ຊາວ ມັກດາລາ ໄດ້
ອອກໄປຫາຖໍ້າມ້ຽນສົບນັ້ນ ເປັນເວລາຕອນເຊົ້າມືດ ແລ້ວນາງເຫັນວ່າແຜ່ນຫີນທີ່
ປິດປາກຖໍ້ານັ້ນ ໄດ້ຖືກຍົກອອກໄປໄວ້ຂ້າງຖໍ້າແລ້ວ
20:2 ພໍເຫັນແລ້ວນາງກໍຟ້າວແລ່ນໄປຫາ ຊີໂມນເປໂຕ ກັບລູກສິດຜູ້ອື່ນນັ້ນທີ່
ພຣະເຢຊູ ຮັກແພງ ແລ້ວເວົ້າໃຫ້ຟັງວ່າ “ເຂົາໄດ້ເອົາສົບຂອງ ພຣະເຢຊູ ອອກ-
ຈາກຖໍ້າໄປແລ້ວ ແລ້ວພວກຂ້ອຍບໍ່ຮູ້ຈັກວ່າເຂົາເອົາສົບເພິ່ນໄປວາງໄວ້ໃສ”
20:3 ບັດນີ້ ເປໂຕ ກັບລູກສິດຜູ້ອື່ນນັ້ນ ກໍຟ້າວແລ່ນອອກໄປຫາຖໍ້າ
20:4 ພວກເຂົາເລີຍພາກັນແລ່ນຢູ່ນັ້ນ ແຕ່ລູກສິດຜູ້ອື່ນນັ້ນໄດ້ແລ່ນໄວກວ່າ ເປໂຕ
ຈັ່ງໄປຮອດຖໍ້າກ່ອນ
20:5 ແລ້ວເຂົາໄດ້ກົ້ມລົງສ່ອງເບິ່ງເຂົ້າໄປ ເຫັນແຕ່ຜ້າປ່ານນັ້ນໄດ້ວາງຢູ່ ແຕ່ວ່າ
ເຂົາບໍ່ໄດ້ເຂົ້າໄປ
20:6 ບັດນີ້ ເປໂຕ ຜູ້ແລ່ນມານໍາຫລັງ ກໍໄດ້ເຂົ້າໄປໃນຖໍ້າ ຈັ່ງເຫັນຜ້າປ່ານວາງຢູ່-
ຫັ້ນ
20:7 ກັບໄດ້ເຫັນຜ້າຜືນນັ້ນທີ່ເຄີຍປົກຫົວຂອງສົບ ພຣະເຢຊູ ຊຶ່ງບໍ່ໄດ້ວາງຢູ່ກັບຜ້າ
ປ່ານນັ້ນ ແຕ່ໄດ້ຖືກພັບໄວ້ຢູ່ຂ້າງໆ ຕ່າງຫາກ
20:8 ແລ້ວລູກສິດຜູ້ອື່ນນັ້ນ ຜູ້ທີ່ມາເຖິງກ່ອນ ກໍໄດ້ເຂົ້າໄປໃນຖໍ້າຄືກັນ ພໍເຂົາເຫັນ
ແລ້ວກໍເລີຍເຊື່ອ
20:9 ຄືຕອນນັ້ນພວກເຂົາຍັງບໍ່ທັນເຂົ້າໃຈໃນ ພຣະຄໍາ ທີ່ວ່າ ເພິ່ນຕ້ອງເປັນຂຶ້ນມາ
ຈາກຕາຍ
20:10 ແລ້ວລູກສິດສອງຄົນນັ້ນ ກໍພາກັນກັບຄືນເມືອເຮືອນຂອງໃຜຂອງມັນ
20:11 ແຕ່ສ່ວນ ມາຣີອາ ນັ້ນ ຢືນຮ້ອງໄຫ້ຢູ່ນອກຖໍ້າ ແລ້ວພວມຮ້ອງໄຫ້ຢູ່ນັ້ນ ກໍໄດ້
ກົ້ມສ່ອງເບິ່ງເຂົ້າໄປໃນຖໍ້າ
20:12 ແລ້ວເຂົາໄດ້ເຫັນເທວະທູດສອງອົງໃສ່ເສື້ອຂາວປະກອບດ້ວຍແສງ ນັ່ງຢູ່
ໜ້ອງທີ່ສົບ ພຣະເຢຊູ ເຄີຍວາງຢູ່ນັ້ນ ອົງໜຶ່ງນັ່ງຢູ່ທາງຫົວ ແລ້ວອີກອົງໜຶ່ງນັ່ງຢູ່
ທາງປາຍຕີນ

20:13 ບັດນີ້ ໝູ່ເທວະທູດນັ້ນໄດ້ຖາມ ມາຣີອາ ວ່າ “ນາງເອີຍ ເຈົ້າຮ້ອງໄຫ້ຍ້ອນອີ-
ຫຍັງ” ນາງຕອບໝູ່ເທວະທູດນັ້ນວ່າ “ຍ້ອນວ່າ ເຂົາໄດ້ເອົາສົບຂອງນາຍຜູ້ຂ້າໄປ
ແລ້ວ ແລ້ວຜູ້ຂ້າບໍ່ຮູ້ຈັກວ່າເຂົາເອົາສົບເພິ່ນໄປໄວ້ໃສ”
20:14 ບັດພໍເວົ້າຈັ່ງຊັ້ນແລ້ວ ນາງກໍຫລຽວຫລັງໄປ ເລີຍເຫັນ ພຣະເຢຊູ ຢືນຢູ່ນັ້ນ
ແຕ່ວ່ານາງບໍ່ຮູ້ຈັກວ່າເປັນໂຕ ພຣະເຢຊູ
20:15 ພຣະເຢຊູ ກໍຖາມນາງວ່າ “ນາງເອີຍ ເຈົ້າຮ້ອງໄຫ້ຍ້ອນອີຫຍັງ ນາງມາຫາ
ໃຜ” ຄືນາງເຂົ້າໃຈຜິດວ່າ ພຣະເຢຊູ ເພິ່ນເປັນນາຍສວນ ກໍເລີຍເວົ້າວ່າ “ນາຍ
ເອີຍ ຄັ່ນນາຍໄດ້ນຳເອົາສົບຂອງ ພຣະເຢຊູ ໄປໃສ ຊ່ອຍບອກຂ້ອຍແໜ່ ວ່ານາຍ
ເອົາໄປມ້ຽນໄວ້ຢູ່ໃສ ແລ້ວຂ້ອຍຈັ່ງຊິໄປເອົາສົບຂອງເພິ່ນ”
20:16 ສ່ວນ ພຣະເຢຊູ ເອີຍຊື່ນາງວ່າ “ ມາຣີອາ ເອີຍ” ນາງໄດ້ຫັນໄປກັບເວົ້າຂຶ້ນ
ເປັນພາສາເຮັບເຣີວ່າ “ ຣັບໂບນີ ເອີຍ” (ແປວ່າອາຈານ)
20:17 ພຣະເຢຊູ ສັ່ງວ່າ “ຢ່າຟ້າວມາຈັບມາຕ້ອງເຮົາເດີ້ ຍ້ອນວ່າ ເຮົາຍັງບໍ່ທັນໄດ້
ຂຶ້ນໄປຫາພຣະເຈົ້າຜູ້ເປັນພໍ່ຂອງເຮົາ ແຕ່ວ່າ ໃຫ້ກັບໄປບອກພີ່ນ້ອງເຮົາແໜ່ວ່າ
‘ເຮົາພວມຊິຂຶ້ນໄປຫາພໍ່ເຮົາກັບພໍ່ຂອງພວກເຈົ້າ ຊຶ່ງເປັນພຣະເຈົ້າຂອງເຮົາກັບ
ເປັນພຣະເຈົ້າຂອງພວກເຈົ້ານຳ’”
20:18 ຈັ່ງຊັ້ນ ມາຣີອາ ຊາວ ມັກດາລາ ນັ້ນກໍໄດ້ກັບມາບອກໃຫ້ພວກລູກສິດຟັງ
ເຖິງເລື່ອງທີ່ນາງໄດ້ໄປເຫັນໂຕ ພຣະເຢຊູ ກັບເຖິງແນວທີ່ ພຣະເຢຊູ ໄດ້ເວົ້າກັບ
ເຂົາ
20:19 ພໍຮອດຄ່ຳຂອງມື້ນັ້ນ ຄືມື້ແຮກຂອງອາທິດ ພວກລູກສິດກໍມາຊຸມກັນໃນຫ້ອງ
ພໍປິດປະຕູເອົາໄລຄັດໄວ້ ຍ້ອນຢ້ານພວກຫົວໜ້າຂອງພວກຢິວ ພຣະເຢຊູ ໄດ້
ເຂົ້າມາຢືນຢູ່ຫວ່າງກາງພວກເຂົາ ແລ້ວເວົ້າກັບພວກເຂົາວ່າ “ຂໍໃຫ້ຄວາມສະ-
ຫງົບສຸກມີຢູ່ກັບພວກເຈົ້າເດີ້”
20:20 ພໍ ພຣະເຢຊູ ເວົ້າແລ້ວ ເພິ່ນເລີຍໃຫ້ພວກເຂົາເບິ່ງມືກັບສ້ວງຂອງເພິ່ນ ແລ້ວ
ພວກລູກສິດໄດ້ດີອົກດີໃຈຂະໜາດທີ່ໄດ້ເຫັນ ພຣະເຢຊູ ນາຍຊີວິດຂອງພວກ-
ເຂົາ

20:21 ພຣະເຢຊູ ເລີຍເວົ້າກັບເຂົາອີກວ່າ "ຂໍໃຫ້ຄວາມສະຫງົບສຸກມີຢູ່ກັບພວກ
ເຈົ້າເດີ້ ພຣະເຈົ້າຜູ້ເປັນພໍ່ໄດ້ໃຊ້ເຮົາມາແນວໃດ ເຮົາກໍຊິໃຊ້ພວກເຈົ້າອອກໄປ
ແນວນັ້ນ"
20:22 ພໍ ພຣະເຢຊູ ເວົ້າຈັ່ງຊັ້ນແລ້ວ ເພິ່ນໄດ້ຫາຍໃຈອອກເປົ່າໃສ່ພວກເຂົາ ແລ້ວ
ໄດ້ເວົ້າກັບພວກເຂົາອີກວ່າ "ໃຫ້ຮັບເອົາ ພຣະວິນຍານ ບໍລິສຸດຊະເດີ້"
20:23 ຄັ່ນພວກເຈົ້າໃຫ້ອະໄພບາບໃຫ້ຄົນໃດ ບາບຂອງຄົນນັ້ນກໍຊິໄດ້ຮັບການອະ-
ໄພ ແຕ່ຄັ່ນບໍ່ໃຫ້ອະໄພ ບາບຂອງເຂົາກໍຍັງຢູ່
20:24 ບັດນີ້ ມີລູກສິດຄົນໜຶ່ງໃນກຸ່ມສິບສອງຄົນນັ້ນຊື່ວ່າ ໂທມາ (ທີ່ຄົນເອີ້ນກັນວ່າ
ແຝດ) ສ່ວນ ໂທມາ ນີ້ ລາວກໍບໍ່ໄດ້ຢູ່ກັບໝູ່ລູກສິດຕອນທີ່ ພຣະເຢຊູ ມາຫາພວກ-
ເຂົາ
20:25 ສ່ວນພວກລູກສິດຄົນອື່ນໆ ກໍໄດ້ເວົ້າໃຫ້ເຂົາຟັງວ່າ "ເຮົາໄດ້ເຫັນ ພຣະເຢຊູ
ແລ້ວ" ແຕ່ ໂທມາ ປະຕິເສດວ່າ "ຄັ່ນຂ້ອຍບໍ່ເຫັນຮອຍຕະປູໃນມືຂອງເພິ່ນ ກັບບໍ່
ໄດ້ເອົານິ້ວຂ້ອຍແຍເຂົ້າໃນຮອຍຕະປູນັ້ນ ກັບບໍ່ໄດ້ເອົາມືຂ້ອຍໃສ່ເຂົ້າໄປໃນສ້ວງ
ຂອງເພິ່ນແລ້ວ ຂ້ອຍກໍບໍ່ຍອມເຊື່ອ"
20:26 ຢູ່ມາອີກແປດມື້ ພວກລູກສິດກໍມາຊຸມກັນຢູ່ໃນຫ້ອງນັ້ນອີກ ບັດນີ້ ໂທມາ ກໍຢູ່
ນັ້ນນໍາ ພຣະເຢຊູ ໄດ້ມາຢືນຢູ່ຫວ່າງກາງພວກເຂົາທັງໆ ທີ່ປະຕູຍັງໃສ່ໄລໄວ້ຢູ່
ພຣະເຢຊູ ກໍເວົ້າກັບພວກເຂົາວ່າ "ຂໍໃຫ້ຄວາມສະຫງົບສຸກມີຢູ່ກັບພວກເຈົ້າເດີ້"
20:27 ຫວ່າງນັ້ນ ພຣະເຢຊູ ເວົ້າກັບ ໂທມາ ວ່າ "ນີ້ແຫລະ ໃຫ້ເອົານິ້ວເຈົ້າມາແຍ
ເບິ່ງມືເຮົາດູ ກັບຍື່ນມືເຈົ້າມາໃສ່ເຂົ້າໄປໃນສ້ວງເຮົາ ຢ່າສົງໄສເລີຍ ແຕ່ໃຫ້ເຊື່ອ
ເດີ້"
20:28 ບັດນີ້ ໂທມາ ຕອບ ພຣະເຢຊູ ວ່າ "ໂອ້ ຜູ້ເປັນນາຍຊີວິດ ກັບເປັນພຣະເຈົ້າ
ຂອງຜູ້ຂ້າເອີຍ"
20:29 ແລ້ວ ພຣະເຢຊູ ບອກເຂົາວ່າ " ໂທມາ ເອີຍ ເຈົ້າໄດ້ເກີດຄວາມເຊື່ອກໍຍ້ອນ
ວ່າເຈົ້າໄດ້ເຫັນກັບຕາ ສ່ວນຜູ້ທີ່ບໍ່ໄດ້ເຫັນເຮົາຄືກັນກັບເຈົ້າ ແຕ່ຍັງຮັບເຊື່ອ ເຂົາຊິ
ໄດ້ພົບເປັນສຸກ"

20:30 ແທ້ຈິງແລ້ວ ພຣະເຢຊູ ໄດ້ເຮັດເຄື່ອງໝາຍອັນສຳຄັນຫລາຍອັນຫລາຍແນວ
ຕໍ່ໜ້າຕໍ່ຕາພວກລູກສິດ ຊຶ່ງບໍ່ໄດ້ບັນທຶກລົງໃນໜັງສືເຫລັ້ມນີ້
20:31 ແຕ່ແນວທີ່ບັນທຶກລົງມານີ້ ກໍເພື່ອພວກເຈົ້າຊິໄດ້ຮັບເຊື່ອໃນ ພຣະເຢຊູ ວ່າ
ເປັນ ພຣະຄຣິດ ພຣະຜູ້ໂຜດໂລກ ຊຶ່ງເປັນ ພຣະບຸດ ຂອງພຣະເຈົ້າ ແລ້ວບັດພໍ
ເຊື່ອ ເຈົ້າກໍຊິໄດ້ຮັບຊີວິດອັນຕະຫລອດໄປເປັນນິດໃນພຣະນາມຂອງເພິ່ນ

## ໂຢຮັນ ບົດທີ 21

21:1 ຫລັງຈາກນັ້ນ ພຣະເຢຊູ ໄດ້ສະແດງໂຕໃຫ້ລູກສິດຂອງເພິ່ນຢູ່ຝັ່ງທະເລສາບ
ຕີເບເຣຍ (ຄື ທະເລສາບ ກາລີເລ ) ແລ້ວເພິ່ນກໍໄດ້ສະແດງໂຕຈັ່ງຊີ້ຄື
21:2 ມື້ໜຶ່ງ ຊີໂມນເປໂຕ ກັບ ໂທມາ (ທີ່ຄົນເອີ້ນກັນວ່າ ແຝດ) ກັບ ນະທານາເອັນ
(ໄທບ້ານ ການາ ໃນແຄວັ້ນ ກາລີເລ ) ກັບພວກລູກຊາຍຂອງ ເຊເບດາຍ ແລ້ວ
ລູກສິດຂອງ ພຣະເຢຊູ ອີກສອງຄົນກໍຢູ່ນຳກັນຢູ່ນັ້ນ
21:3 ຊີໂມນເປໂຕ ເລີຍເວົ້າກັບພວກເຂົາວ່າ “ເຮົາຊິອອກໄປຫາປາເດີ້” ພວກໝູ່ຢູ່
ນັ້ນບອກວ່າ “ຂໍພວກເຮົາໄປນຳແໜ່” ພວກເຂົາກໍເລີຍພາກັນລົງເຮືອອອກໄປຫາ
ປາ ແລ້ວຫາປາໝົດຄືນແຕ່ບໍ່ໄດ້ປາຈັກໂຕ
21:4 ບັດຮອດຕອນເຊົ້າມາ ພຣະເຢຊູ ມາຢືນຢູ່ຝັ່ງທະເລສາບນັ້ນ ແຕ່ວ່າພວກ
ລູກສິດບໍ່ໄດ້ຮູ້ຈັກວ່າເປັນໂຕ ພຣະເຢຊູ
21:5 ແລ້ວ ພຣະເຢຊູ ໄດ້ເອີ້ນຖາມພວກເຂົາວ່າ “ໝູ່ພວກເອີຍ ພວກເຈົ້າມີແນວກິນ
ບໍ້” ພວກເຂົາກໍຕອບວ່າ “ບໍ່ມີເລີຍ”
21:6 ພຣະເຢຊູ ເລີຍບອກພວກເຂົາວ່າ “ໃຫ້ຢ່ອນອວນລົງໄປທາງຂວາຂອງເຮືອ
ເດີ້” ແລ້ວພວກເຂົາກໍເລີຍຢ່ອນອວນລົງຕາມທີ່ເພິ່ນບອກ ແລ້ວບັດນີ້ ພວກເຂົາ
ໄດ້ປາຫລາຍຂະໜາດຈົນດຶງອວນບໍ່ຂຶ້ນເລີຍ
21:7 ບັດນີ້ລູກສິດຜູ້ທີ່ ພຣະເຢຊູ ຮັກແພງນັ້ນ ໄດ້ບອກ ເປໂຕ ວ່າ “ນີ້ເນາະ ນາຍຊີ-
ວິດເຮົາ” ບັດພໍ ຊີໂມນເປໂຕ ໄດ້ຍິນວ່າເປັນນາຍຊີວິດ ເຂົາກໍເອົາເສື້ອຄຸມໃສ່
(ຍ້ອນໄດ້ຖອດໄວ້ເຮັດວຽກ) ແລ້ວກໍໂຕນລົງນ້ຳ ລອຍເຂົ້າຫາຝັ່ງ
21:8 ແຕ່ສ່ວນສິດຜູ້ອື່ນໆ ນັ້ນ ກໍພາກັນພາຍເຮືອເຂົ້າຫາຝັ່ງ ລາກອວນທີ່ຕິດປາໄປ
ນຳ ຄືພວກເຂົາບໍ່ໄດ້ຫ່າງໄກຈາກຝັ່ງປານໃດ ປະມານໜຶ່ງຮ້ອຍແມັດເອງ

21:9 ບັດພໍພວກເຂົາເຖິງຝັ່ງແລ້ວ ກໍເຫັນມີກອງຖ່ານໄຟ ແລ້ວກໍມີປາກັບເຂົ້າຈີ່ວາງ
ປີ້ງຢູ່ນັ້ນ
21:10 ພຣະເຢຊູ ເລີຍເວົ້າກັບພວກເຂົາວ່າ "ໃຫ້ເອົາປາທີ່ໄດ້ມາເມື່ອກີ້ນີ້ຂຶ້ນມາແດ່"
21:11 ຊີໂມນເປໂຕ ກໍເລີຍໄປລາກອວນຂຶ້ນຝັ່ງ ມີແຕ່ປາໂຕໃຫຍ່ໆ ເຕັມລົ້ນຢູ່ນັ້ນ
ນັບເບິ່ງແລ້ວກໍໄດ້ໜຶ່ງຮ້ອຍຫ້າສິບສາມໂຕ ຫລາຍຄືນັ້ນອວນກໍບໍ່ໄດ້ຂາດເລີຍ
21:12 ພຣະເຢຊູ ເອີ້ນພວກເຂົາວ່າ "ເຊີນມາກິນເຖີ" ແລ້ວໃນພວກລູກສິດນັ້ນ ຍັງບໍ່
ມີໃຜກ້າຖາມເພິ່ນວ່າ "ນາຍແມ່ນໃຜ" ຍ້ອນເຂົາຮູ້ກັນວ່າ ຕ້ອງເປັນນາຍຊີວິດ
ຂອງເຂົາ
21:13 ແລ້ວ ພຣະເຢຊູ ໄດ້ມາເອົາເຂົ້າຈີ່ ພ້ອມກັບປາປີ້ງໃຫ້ພວກເຂົາ
21:14 ນີ້ກໍເປັນເທື່ອທີ່ສາມທີ່ ພຣະເຢຊູ ສະແດງໂຕໃຫ້ພວກລູກສິດເຫັນ ຫລັງຈາກ
ເພິ່ນໄດ້ເປັນຂຶ້ນມາຈາກຕາຍ
21:15 ພໍພວກເຂົາກິນອິ່ມແລ້ວ ພຣະເຢຊູ ເວົ້າກັບ ຊີໂມນເປໂຕ ວ່າ " ຊີໂມນເປໂຕ
ລູກ ໂຢນາ ເອີຍ ເຈົ້າຮັກເຮົາອີຫລີຫລາຍກວ່າພວກນີ້ຮັກເຮົາບໍ້" ເປໂຕ ຕອບ
ເພິ່ນວ່າ "ເອີ້ ນາຍຜູ້ຂ້າຮູ້ຈັກວ່າ ຜູ້ຂ້າຮັກນາຍຄືເປັນອ້າຍ" ພຣະເຢຊູ ເລີຍບອກ
ເຂົາວ່າ "ໃຫ້ລ້ຽງແກະນ້ອຍຂອງເຮົາເດີ້" *(ໃຫ້ເບິ່ງ ໂຢຮັນ 13:36-37)*
21:16 ແລ້ວ ພຣະເຢຊູ ຖາມອີກເປັນເທື່ອທີ່ສອງວ່າ " ຊີໂມນ ລູກ ໂຢນາ ເອີຍ ເຈົ້າ
ຮັກເຮົາອີຫລີບໍ້" ເຂົາກໍຕອບວ່າ "ເອີ້ ນາຍຜູ້ຂ້າຮູ້ຈັກວ່າຜູ້ຂ້າຮັກນາຍຄືເປັນອ້າຍ"
ເພິ່ນເວົ້າວ່າ "ໃຫ້ເບິ່ງແຍງໝູ່ແກະຂອງເຮົາເດີ້"
21:17 ເພິ່ນເລີຍຖາມອີກເປັນເທື່ອທີ່ສາມວ່າ " ຊີໂມນ ລູກ ໂຢນາ ເອີຍ ເຈົ້າຮັກເຮົາ
ຄືແຄ່ເປັນອ້າຍບໍ້" ບັດນີ້ ເປໂຕ ກໍອຸກອັ່ງໃຈທີ່ ພຣະເຢຊູ ຖາມວ່າ "ເຈົ້າຮັກເຮົາບໍ້"
ເຖິງສາມເທື່ອ ກໍເລີຍຕອບເພິ່ນວ່າ "ນາຍຜູ້ຂ້າເອີຍ ນາຍຮູ້ຈັກໝົດຄູ່ອັນຄູ່ແນວຢູ່
ແລ້ວ ກັບຮູ້ຈັກວ່າຜູ້ຂ້າຮັກນາຍຄືເປັນອ້າຍຫລາຍສໍ່າໃດ" ພຣະເຢຊູ ເວົ້າກັບເຂົາ
ວ່າ "ໃຫ້ລ້ຽງໝູ່ແກະຂອງເຮົາ ເດີ້"
21:18 "ເຮົາຊິບອກເຈົ້າຕາມຊື່ນີ້ເນາະ ວ່າ ຕອນເຈົ້າຍັງໜຸ່ມ ເຈົ້າເຄີຍແຕ່ງໂຕໄປໃສ
ມາໃສຕາມໃຈມັກ ແຕ່ວ່າບັດເຖົ້າແລ້ວເຈົ້າກໍຊິຢຽດມືຂອງເຈົ້າອອກ ແລ້ວຜູ້ອື່ນກໍ
ຊິມັດເຈົ້າໄວ້ ລາກໄປໜ້ອງທີ່ເຈົ້າບໍ່ຢາກໄປ"

21:19 ເຫດທີ່ ພຣະເຢຊູ ໄດ້ເວົ້າຈັ່ງຊີ້ ເປັນການບົ່ງບອກເຖິງການຕາຍຂອງ ເປໂຕ
ວ່າ ເຂົາຊິຖວາຍກຽດພຣະເຈົ້າໃນການຕາຍຂອງເຂົານັ້ນ ພໍເວົ້າແລ້ວ ພຣະເຢຊູ
ກໍເວົ້າຕໍ່ອີກວ່າ "ໃຫ້ຕາມເຮົາມາເດີ້"
21:20 ແຕ່ ເປໂຕ ຫລຽວຄືນຫລັງເຫັນລູກສິດຜູ້ນັ້ນທີ່ ພຣະເຢຊູ ຮັກແພງ ພວມມາ
ນໍາຫລັງ ແມ່ນລູກສິດຜູ້ທີ່ໄດ້ນັ່ງກິນຢູ່ທາງຂ້າງ ພຣະເຢຊູ ຕອນງານລ້ຽງສະ-
ຫລອງນັ້ນ ທີ່ໄດ້ຖາມ ພຣະເຢຊູ ວ່າ "ນາຍຜູ້ຂ້າເອີຍ ແມ່ນຜູ້ໃດແໜ່ທີ່ຊິທໍລະຍົດ
ໃສ່ນາຍ" *(ໃຫ້ເບິ່ງ ໂຢຮັນ 13:23-25)*
21:21 ບັດພໍ ເປໂຕ ເຫັນລູກສິດຜູ້ນັ້ນ ກໍເລີຍຖາມ ພຣະເຢຊູ ວ່າ "ນາຍຜູ້ຂ້າເອີຍ
ແລ້ວຜູ້ນີ້ເດ້"
21:22 ພຣະເຢຊູ ໄດ້ບອກ ເປໂຕ ວ່າ "ຄັ່ນໃຈເຮົາຢາກຊິໃຫ້ເຂົາຢູ່ຈົນຮອດຍາມທີ່
ເຮົາຊິກັບມານັ້ນ ມັນຊິເປັນຫຍັງກັບເຈົ້າເນາະ ສ່ວນເຈົ້າກໍໃຫ້ຕາມເຮົາມາເດີ້"
21:23 ບັດນີ້ ຖ້ອຍຄໍາຂອງ ພຣະເຢຊູ ໄດ້ລືກັນໃນກຸ່ມພີ່ນ້ອງໃນພຣະເຈົ້າ ວ່າລູກ-
ສິດເພິ່ນຜູ້ນີ້ຊິບໍ່ຕາຍເລີຍ ແຕ່ວ່າ ພຣະເຢຊູ ບໍ່ໄດ້ບອກ ເປໂຕ ວ່າຜູ້ນັ້ນຊິບໍ່ຕາຍ
ເພິ່ນພຽງແຕ່ເວົ້າວ່າ "ຄັ່ນໃຈເຮົາຢາກຊິໃຫ້ເຂົາຢູ່ຈົນຮອດຍາມທີ່ເຮົາຊິກັບມານັ້ນ
ມັນຊິເປັນຫຍັງກັບເຈົ້າເນາະ"
21:24 ແມ່ນລູກສິດຜູ້ນັ້ນ ທີ່ເປັນຫຼັກຖານພະຍານ ຈັ່ງໄດ້ບັນທຶກເອົາໄວ້ ແລ້ວພວກ
ເຮົາໝັ້ນໃຈວ່າຄໍາພະຍານຂອງເຂົານັ້ນເປັນຈິງ
21:25 ແລ້ວກໍຍັງມີອີກຫລາຍອັນຫລາຍແນວທີ່ ພຣະເຢຊູ ໄດ້ເຮັດ ຊຶ່ງວ່າຄັ່ນຊິໄດ້
ບັນທຶກໄວ້ໃຫ້ໝົດຄູ່ແນວເປັນເລື່ອງຕໍ່ໆ ກັນ ຂ້ອຍວ່າໝົດໂລກນີ້ກໍຍັງກວ້າງໃຫຍ່
ບໍ່ພໍ ທີ່ຊິເກັບມ້ຽນໄວ້ໄດ້ ອາເມນ

# ກິດຈະການ

## ກິດຈະການ ບົດທີ 1

1:1 ຮຽນ ນາຍ ເທໂອຟີໂລ (ໝູ່ທີ່ຮັກພຣະເຈົ້າ) ໃນຈົດໝາຍທໍາອິດທີ່ຂ້ອຍສົ່ງມາ
ນັ້ນ ຂ້ອຍໄດ້ຂຽນລົງໄວ້ຄູ່ຢ່າງ ແນວທີ່ ພຣະເຢຊູ ໄດ້ເຮັດ ໄດ້ສອນຕັ້ງແຕ່ເພິ່ນ
ເລີ່ມເຮັດມານັ້ນ

1:2 ຈົນຮອດມື້ທີ່ພຣະເຈົ້າໄດ້ຮັບເພິ່ນຂຶ້ນເມືອ ຫລັງຈາກເພິ່ນ ໄດ້ສັ່ງລາງແນວໄວ້
ໂດຍທາງ ພຣະວິນຍານ ເປັນສີ່ ໃຫ້ກັບທູດພິເສດທີ່ເພິ່ນໄດ້ເລືອກໄວ້ນັ້ນ
1:3 ແມ່ນໝູ່ພວກທີ່ເພິ່ນໄດ້ສຳແດງເພິ່ນເອງ ວ່າໄດ້ຄືນຊີວິດຫລັງຈາກຖືກທໍລະ-
ມານຮອດຄືງປະຫານ ຈັ່ງໄດ້ພິສູດຢ່າງຄັກແນ່ໂດຍຫຼັກຖານພະຍານຫລາຍອັນ
ຫລາຍແນວໃຫ້ເຂົາເຫັນໂຕເພິ່ນເປັນເວລາສີ່ສິບມື້ ແລ້ວຈັ່ງບອກເຂົາຫລາຍແນວ
ເຖິງເລື່ອງລາຊະອານາຈັກຂອງພຣະເຈົ້ານຳ
1:4 ແລ້ວຕອນພວກເຂົາຢູ່ນຳກັນນັ້ນ ເພິ່ນໄດ້ສັ່ງພວກເຂົາໄວ້ ບໍ່ໃຫ້ອອກຈາກ
ເມືອງ ເຢຣູຊາເລັມ ໄປ ແຕ່ໃຫ້ຄອຍຖ້າແນວທີ່ພຣະເຈົ້າຜູ້ເປັນພໍ່ໄດ້ສັນຍາໄວ້ນັ້ນ
ເພິ່ນວ່າ “ເປັນແນວທີ່ພວກເຈົ້າໄດ້ຍິນເຮົາບອກໄວ້ແລ້ວນັ້ນເນາະ
1:5 ໂດຍວ່າ ໂຢຮັນ ໄດ້ໃຫ້ຮັບບັບຕິດສະມາໂດຍຈຸ່ມນໍ້າກໍແມ່ນ ແຕ່ອີກບໍ່ຈັກມື້
ພວກເຈົ້າກໍຊິຮັບການຈຸ່ມໂດຍ ພຣະວິນຍານ ”
1:6 ແລ້ວຢູ່ມາ ຕອນພວກເຂົາໄດ້ມາໂຮມກັນ ເຂົາຈັ່ງຖາມເພິ່ນວ່າ “ນາຍເຈົ້າຂ້າ
ເອີຍ ນາຍຊິຕັ້ງແຜ່ນດິນອິດສະຣາເອນຟື້ນຂຶ້ນມາໃໝ່ອີກໃນຍາມນີ້ບໍ້”
1:7 ເພິ່ນເລີຍຕອບເຂົາວ່າ “ມັນບໍ່ຈຳເປັນດອກ ທີ່ພວກເຈົ້າຊິຕ້ອງຮູ້ຈັກຍາມເວລາ
ຕ່າງໆ ທີ່ພຣະເຈົ້າຜູ້ເປັນພໍ່ໄດ້ກຳນົດໄວ້ໂດຍສິດທິອຳນາດຂອງເພິ່ນເອງ
1:8 ແຕ່ພວກເຈົ້າກໍຊິຮັບອຳນາດພິເສດ ບັດ ພຣະວິນຍານ ມາປະທັບຢູ່ເທິງພວກ
ເຈົ້າ ແລ້ວຕອນນັ້ນພວກເຈົ້າຊິໄດ້ເປັນພະຍານເຖິງເຮົາ ທັງໃນເມືອງ ເຢຣູຊາ-
ເລັມ ທົ່ວແຄວ້ນ ຢູດາຍ ແຄວ້ນ ຊາມາເຣຍ ຈົນຮອດສຸດປາຍແຜ່ນດິນໂລກນຳ”
1:9 ບັດເວົ້າແນວນັ້ນແລ້ວ ໃນຕອນທີ່ພວກເຂົາພວມຈ້ອງເບິ່ງເພິ່ນຢູ່ ເພິ່ນກໍຖືກຮັບ
ຂຶ້ນໄປເທິງຟ້າ ແລ້ວຈັ່ງມີເມກຄຸມເພິ່ນໄວ້ໃຫ້ຫລີກເວັ້ນສາຍຕາຂອງເຂົາ
1:10 ແລ້ວບັດເຂົາພວມຈ້ອງເບິ່ງເທິງຟ້າຕອນເພິ່ນພວມຂຶ້ນໄປຢູ່ຫັ້ນ ໃນຫວ່າງນັ້ນ
ພໍດີ ມີຜູ້ຊາຍສອງຄົນນຸ່ງເສື້ອຂາວ ມາຢືນຢູ່ຂ້າງໆ ພວກເຂົາ
1:11 ແລ້ວຜູ້ຊາຍນັ້ນເວົ້າວ່າ “ ໄທ ກາລີເລ ເອີຍ ເປັນຫຍັງພວກເຈົ້າຈັ່ງຢືນຈ້ອງ
ເບິ່ງເທິງຟ້າສະຫວັນ ຄື ພຣະເຢຊູ ຜູ້ດຽວກັນນີ້ທີ່ຖືກຮັບເອົາໄປຈາກພວກເຈົ້າຂຶ້ນ
ໄປເທິງທ້ອງຟ້ານັ້ນ ເພິ່ນກໍຊິກັບມາອີກ ຄືກັນກັບທີ່ພວກເຈົ້າໄດ້ເຫັນເພິ່ນຂຶ້ນໄປ
ສະຫວັນນັ້ນເນາະ”

1:12 ແລ້ວພວກເຂົາຈັ່ງລົງຈາກພູເຂົາໝາກກອກເທດ ຫລົບເມືອເມືອງ ເຢຣູຊາ-
ເລັມ ຊຶ່ງຫ່າງໄກກັນທໍ່ກັບລະຍະທາງທີ່ອະນຸຍາດໃຫ້ຍ່າງໄດ້ໃນມື້ຢຸດພັກວັນຊະ-
ບາໂຕ
1:13 ບັດເຂົ້ານະຄອນແລ້ວພວກເຂົາຈັ່ງຂຶ້ນໄປໃນຫ້ອງຊັ້ນເທິງ ເປັນຫ້ອງພັກຂອງ
ເປໂຕ ຢາໂກໂບ ໂຢຮັນ ອັນເດອາ ຟີລິບ ໂທມາ ບາຣະໂທໂລມາຍ ມັດ-
ທາຍ ຢາໂກໂບ (ລູກຊາຍຂອງ ອາລະຟາຍ ) ຊີໂມນ ເຊໂລເຕ ກັບ ຢູດາ
(ນ້ອງຊາຍຂອງ ຢາໂກໂບ ) ໄດ້ພັກຢູ່ຫັ້ນ
1:14 ຄົນພວກນີ້ໄດ້ຕຸ້ມໂຮມກັນອະທິຖານອ້ອນວອນເປັນນ້ຳໜຶ່ງໃຈດຽວກັນ ຮ່ວມ-
ກັນຢູ່ກັບພວກແມ່ຍິງ ກັບ ມາຣີອາ ຜູ້ເປັນແມ່ຂອງ ພຣະເຢຊູ ພ້ອມກັບພວກ
ນ້ອງຊາຍຂອງເພິ່ນນຳ
1:15 ແລ້ວໃນຕອນນັ້ນ ເປໂຕ ໄດ້ຢືນຂຶ້ນຢູ່ກາງຊຸມໝູ່ພວກສາວົກ (ຄົນຮ່ວມກັນ
ຢູ່ຫັ້ນມີປະມານຮ້ອຍຊາວຄົນ) ແລ້ວໄດ້ເວົ້າຂຶ້ນວ່າ
1:16 “ພີ່ນ້ອງທັງຫລາຍເອີຍ ຈຳເປັນຊິຕ້ອງເປັນໄປຕາມ ພຣະຄຳ ຊຶ່ງ ພຣະວິນ-
ຍານ ໄດ້ກ່າວໄວ້ຜ່ານທາງປາກຂອງກະສັດ ດາວິດ ເຖິງເລື່ອງ ຢູດາ ຜູ້ທໍລະຍົດ
ນັ້ນ ທີ່ນຳພາພວກຄົນທີ່ໄປຈັບ ພຣະເຢຊູ
1:17 ຄືໄດ້ນັບກັນວ່າໂຕເຂົາໄດ້ເຂົ້າມີສ່ວນຮ່ວມໃນພວກເຮົາ ກັບມີສ່ວນຮ່ວມໃນ
ງານຮັບໃຊ້ນີ້ນຳ”
1:18 (ບັດນີ້ ສ່ວນຜູ້ຊາຍຜູ້ນັ້ນ ເງິນຄ່າຈ້າງທີ່ເຂົາຮັບມາຈາກແນວຊົ່ວນັ້ນ ມີການຊື້
ດິນຝັງສົບເຂົາ ຊຶ່ງເຂົາເລີຍຕົກເຫວຖິ້ມໜ້າລົງທ້ອງແຕກ ໄສ້ພຸງແຕກກະຈາຍ
ອອກມາໝົດ
1:19 ແລ້ວເຫດການນີ້ ຄູ່ຄົນຢູ່ເມືອງ ເຢຣູຊາເລັມ ກໍຮູ້ຈັກນຳ ເຂົາຈັ່ງເອີ້ນທີ່ດິນແປງ
ນັ້ນຕາມພາສາຂອງເຂົາວ່າ “ ອະເກັນດາມາ ” ແປວ່າ “ທົ່ງເລືອດ”)
1:20 “ຍ້ອນມີ ພຣະຄຳ ຂຽນໄວ້ໃນໜັງສື ເພງສັນລະເສີນ ວ່າ ‘ຂໍໃຫ້ທີ່ພັກອາໄສ
ຂອງເຂົາ ຖືກປ່ອຍໄວ້ໃຫ້ຮົກຮ້າງ’ ກັບ ‘ຢ່າໃຫ້ຜູ້ໃດມາອາໄສຢູ່ໝ້ອງນັ້ນເລີຍ’
ກັບວ່າ ‘ຂໍໃຫ້ອີກຄົນໜຶ່ງມາຮັບເອົາຕຳແໜ່ງໜ້າທີ່ຂອງເຂົາເຖີ້ນ’

1:21 ຈັ່ງຊັ້ນ ໃຫ້ເຮົາພິຈາລະນາຄົນໜຶ່ງໃນຊຸມຜູ້ຊາຍທີ່ເປັນພວກດຽວກັບເຮົາ ຢູ່
ນຳກັນມາຕະຫລອດຍາມທີ່ ພຣະເຢຊູເຈົ້າ ໄດ້ ເຂົ້າໆ ອອກໆ ໃນໝູ່ພວກເຮົາ
1:22 ເລີ່ມຕົ້ນຕັ້ງແຕ່ການບັບຕິດສະມາຈຸ່ມນ້ຳຂອງ ໂຢຮັນ ຈົນຮອດມື້ທີ່ ພຣະເຢຊູ
ໄດ້ຖືກຮັບຂຶ້ນໄປຈາກພວກເຮົາ ຕ້ອງມີຄົນໜຶ່ງໃນພວກເຮົາທີ່ຊິແຕ່ງຕັ້ງໄວ້ ເປັນ
ຫຼັກຖານພະຍານນຳກັນກັບພວກເຮົາ ເຖິງການເປັນຂຶ້ນມາຈາກຕາຍຂອງເພິ່ນ”
1:23 ແລ້ວພວກເຂົາຈັ່ງສະເໜີຊື່ສອງຄົນ ຄື ໂຢເຊບ (ທີ່ເອີ້ນວ່າ ບາຣະຊັບບາ
ນາມສະກຸນ ຢູສະໂຕ ) ກັບ ມັດເທຍ
1:24 ແລ້ວພວກເຂົາຈັ່ງອະທິຖານເວົ້າວ່າ “ໂອ້ ພຣະເຈົ້າ ຜູ້ເປັນນາຍຊີວິດຂອງ
ພວກຜູ້ຂ້າ ຜູ້ທີ່ຮູ້ໃຈຂອງມະນຸດທັງໝົດ ຂໍສຳແດງວ່າໃນສອງຄົນນີ້ພຣະເຈົ້າ
ເລືອກເອົາຜູ້ໃດ
1:25 ເພື່ອໃຫ້ຜູ້ນັ້ນຮັບສ່ວນໃນການງານຮັບໃຊ້ນີ້ ກັບຮັບຕຳແໜ່ງເປັນທູດພິເສດ
ແທນ ຢູດາ ຍ້ອນໂດຍການລະເມີດນັ້ນ ເຂົາຈັ່ງຫລົງຈາກໜ້າທີ່ແລ້ວໄປສູ່ໝ້ອງ
ຂອງເຂົາເອງ”
1:26 ເວົ້າແລ້ວພວກເຂົາຈັ່ງຈັບສະຫລາກກັນ ແລ້ວສະຫລາກນັ້ນກໍໄດ້ຕົກເປັນ
ມັດເທຍ ພວກເຂົາຈັ່ງນັບວ່າ ເຂົາເຂົ້າມີສ່ວນຮ່ວມນຳກັນກັບທູດພິເສດສິບເອັດ
ຄົນນັ້ນ
1:33 ນາຍພັນຈັ່ງເຂົ້າໄປໃກ້ແລ້ວຈັບໂຕໂປໂລໄວ້ ສັ່ງໃຫ້ເອົາໂສ້ສອງເສັ້ນລ່າມ
ລາວໄວ້ແລ້ວສອບຖາມວ່າ ຄົນນີ້ເປັນໃຜແລ້ວເຂົາໄດ້ເຮັດອີຫຍັງ

# ກິດຈະການ ບົດທີ 2

2:1 ແລ້ວບັດຮອດມື້ສະຫລອງ ເພັນເຕຄໍສະເຕ ພວກໝູ່ລູກສິດນັ້ນກໍເປັນນ້ຳໜຶ່ງ
ໃຈດຽວກັນ ມາໂຮມກັນຢູ່ບ່ອນດຽວ
2:2 ແລ້ວໃນທ່ວາງນັ້ນພໍດີ ມີສຽງດັ່ງກ້ອງລົງມາຈາກຟ້າ ຄືກັນກັບສຽງລົມພະຍຸ
ແຮງເຂົ້າທົ່ວເຮືອນທີ່ເຂົາພວມນັ່ງຢູ່
2:3 ແລ້ວມີແສງລັກສະນະເປັນຄືລີ້ນຄືແປວໄຟ ກະຈາຍໄປຢູ່ເທິງຫລັງພວກເຂົາຄູ່
ຄົນ

2:4 ແລ້ວພວກເຂົາໄດ້ປະກອບດ້ວຍ ພຣະວິນຍານ ຈັ່ງຕັ້ງຕົ້ນເວົ້າເປັນພາສາ
ຕ່າງໆ ຕາມທີ່ ພຣະວິນຍານ ພາໃຫ້ເວົ້າ
2:5 ບັດນີ້ ມີພວກ ຊາວຢິວ ຈາກຄູ່ປະເທດທົ່ວໃຕ້ຟ້າຢູ່ນັ້ນ ເປັນຜູ້ທີ່ເຄົາລົບພຣະ-
ເຈົ້າ ມາພັກຢູ່ເມືອງ ເຢຣູຊາເລັມ
2:6 ແລ້ວບັດພໍໄດ້ຍິນສຽງເລື່ອງລືອອກໄປນັ້ນ ພວກເຂົາຈັ່ງມາຈັບກຸ່ມກັນຟັງ
ເຂົາກໍເປັນຕາງຶດຍ້ອນຕ່າງຄົນຕ່າງກໍໄດ້ຍິນພວກລູກສິດນັ້ນ ເວົ້າເປັນສໍານຽງ
ທ້ອງຖິ່ນຂອງພວກເຂົາເອງແຕ່ລະຄົນ
2:7 ພວກເຂົາເລີຍແປກໃຈເປັນຕາງຶດ ສັງເກດໃຈຈັ່ງເວົ້າກັນວ່າ “ນີ້ແຫລະ ຄົນ
ພວກທີ່ເວົ້າກັນນີ້ ເປັນ ໄທ ກາລີເລ ບໍ່ແມ່ນບໍ້
2:8 ແລ້ວເປັນຫຍັງ ພວກເຮົາຈັ່ງໄດ້ຍິນເຂົາເວົ້າເປັນພາສາທ້ອງຖິ່ນຂອງບ້ານເກີດ
ເມືອງນອນຂອງເຮົາເອງ
2:9 ຄືຊາວ ປາເທຍ ຊາວ ເມເດຍ ຊາວ ເອລາມ ກັບຄົນທີ່ອາໄສຢູ່ໃນເຂດ ເມໂຊ-
ໂປຕາເມຍ ກັບແຄວ້ນ ຢູດາຍ ແຄວ້ນ ກາປາໂດເກຍ ແຄວ້ນ ປົນໂຕ ກັບ ເອ-
ເຊຍ ນໍາ
2:10 ກັບໃນແຄວ້ນ ຟີເຄຍ ແຄວ້ນ ປໍາຟີເລຍ ປະເທດ ເອຢິບ ໃນແຄວ້ນ ລີເບຍ
ຊຶ່ງຢູ່ແຖວນະຄອນ ກີເຣເນ ກັບຄົນມາຈາກ ໂຣມ ທັງພວກຢິວກັບຄົນຕ່າງຊາດ
ທີ່ເຂົ້າຄວາມເຊື່ອນໍາຄົນ ຢິວ
2:11 ກັບຊາວ ເກາະກະເຣເຕ ພ້ອມກັບຊາວ ອາຣາເບຍ ນໍາ ພວກເຮົາຕ່າງຄົນ
ຕ່າງກໍໄດ້ຍິນຄົນໝູ່ນີ້ ປະກາດພຣະລາດຊະກິດອັນລໍ້າເລີດຂອງພຣະເຈົ້າ ເປັນ
ສໍານຽງພາສາຕ່າງໆ ຂອງພວກເຮົາເອງ”
2:12 ພວກເຂົາຈັ່ງງຶດຂະໜາດ ເລີຍເກີດສົງໄສເວົ້າກັນວ່າ “ແນວນີ້ໝາຍຄວາມວ່າ
ຈັ່ງໃດນໍ້”
2:13 ແຕ່ຜູ້ລາງຄົນກໍເວົ້າເຍາະເຍີ້ຍວ່າ “ຄົນໝູ່ນີ້ເມົາເຫລົ້າອະງຸ່ນດອງໃໝ່ຊື່ໆ
ດອກ”

2:14 ແຕ່ ເປໂຕ ໄດ້ຢືນຂຶ້ນກັບທູດພິເສດສິບເອັດຄົນນັ້ນ ເວົ້າເປັນສຽງດັ່ງໃຫ້ຄົນຢູ່
ນັ້ນຟັງວ່າ “ຊາວ ຢູດາຍ ກັບຄູ່ຄົນທີ່ຢູ່ໃນເມືອງ ເຢຣູຊາເລັມ ທັງຫລາຍເອີຍ ຟັງ
ຂ້ອຍເວົ້າເດີ້ ໃຫ້ຮູ້ຈັກວ່າ
2:15 ຄົນໝູ່ນີ້ບໍ່ໄດ້ເມົາອີຫຍັງຕາມຢ່າງພວກເຈົ້າຄຶດນັ້ນດອກ ຍ້ອນວ່າເປັນເວລາ
ແຄ່ສາມໂມງເຊົ້າເອງ
2:16 ຄືເຫດການແນວໝູ່ນີ້ໄດ້ເປັນໄປຕາມ ພຣະຄຳ ທີ່ ໂຢເອນ ຜູ້ເປັນປາກເປັນ-
ສຽງຂອງພຣະເຈົ້າໄດ້ເວົ້າໄວ້ວ່າ
2:17 ‘ພຣະເຈົ້າເວົ້າວ່າ ໃນຍຸກສຸດທ້າຍພູ້ນ ເຮົາຊິເທ ພຣະວິນຍານ ຂອງເຮົາອອກ
ມາເໜືອໝົດຄູ່ຄົນ ລູກຊາຍລູກສາວຂອງພວກເຈົ້າຊິເວົ້າຄຳພະຍາກອນ ຜູ້ຊາຍ
ໜຸ່ມຂອງພວກເຈົ້າຊິເຫັນນິມິດໝາຍ ແລ້ວຜູ້ເຖົ້າຜູ້ແກ່ກໍຊິຝັນເຫັນແນວນັ້ນແນວ
ນີ້
2:18 ແລ້ວໃນຍາມນັ້ນ ເຮົາຊິເທ ພຣະວິນຍານ ຂອງເຮົາເທິງຂ້າທາດຜູ້ຊາຍກັບ
ຂ້າທາດຍິງຂອງເຮົາ ແລ້ວຄົນໝູ່ນັ້ນຊິພະຍາກອນນຳ
2:19 ແລ້ວເຮົາຊິເຮັດເຫດການມະຫັດສະຈັນອັນຢູ່ເທິງທ້ອງຟ້າ ກັບເຄື່ອງໝາຍອັນ
ສຳຄັນຢູ່ແຜ່ນດິນໂລກຂ້າງລຸ່ມ ເປັນທັງເລືອດ ທັງໄຟ ພ້ອມທັງໝອກ ທັງຄວັນ
2:20 ຕະເວັນກໍຊິມືດໄປ ເດືອນກໍຊິກາຍເປັນເລືອດ ອັນນີ້ກ່ອນຊິຮອດມື້ສຳຄັນອັນ
ຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້ານັ້ນ
2:21 ແລ້ວມັນຊິເປັນໄປໃນຕອນນັ້ນວ່າ ຜູ້ໃດທີ່ຮ້ອງຫາອອກພຣະນາມຂອງພຣະ-
ຜູ້ເປັນເຈົ້າ ຜູ້ນັ້ນກໍຊິລອດພົ້ນ’
2:22 ພວກຊົນຊາດ ອິສະຣາເອນ ເອີຍ ໃຫ້ຟັງຄວາມເວົ້ານີ້ເດີ້ ຄື ພຣະເຢຊູ ຊາວ
ນາຊາເຣັດ ນີ້ ຜູ້ທີ່ພຣະເຈົ້າພໍໃຈແຕ່ງຕັ້ງໄວ້ ໂດຍໃຫ້ມີເຫດການມະຫັດສະຈັນ
ກັບເຄື່ອງໝາຍອັນສຳຄັນຕ່າງໆ ເກີດຂຶ້ນຢູ່ນຳພວກເຈົ້າ ແນວທີ່ພຣະເຈົ້າໄດ້ເຮັດ
ຜ່ານທາງ ພຣະເຢຊູ ນັ້ນ ທີ່ພວກເຈົ້າເອງຮູ້ຈັກຢູ່ແລ້ວ
2:23 ແລ້ວເພິ່ນຜູ້ນີ້ເນາະ ທີ່ຖືກມອບໄວ້ຕາມແຜນການທີ່ພຣະເຈົ້າໄດ້ວາງໄວ້ລ່ວງ
ໜ້າມາກ່ອນນັ້ນ ພວກເຈົ້າເອງຈັ່ງໄດ້ຈັບເອົາເພິ່ນໂດຍທາງມືຊົ່ວ ໄປປະຫານໃຫ້
ຕາຍ

2:24 ຊຶ່ງຜູ້ນີ້ເນາະ ທີ່ພຣະເຈົ້າໄດ້ບັນດານໃຫ້ມີຊີວິດເປັນຂຶ້ນມາຈາກຕາຍ ໂດຍໄດ້
ໃຫ້ຫລຸດພົ້ນຈາກຄວາມເຈັບປວດແຫ່ງຄວາມຕາຍເສຍແລ້ວ ຍ້ອນວ່າຄວາມ
ຕາຍນັ້ນຊິຄອບງຳເພິ່ນໄວ້ບໍ່ໄດ້ເລີຍ
2:25 ຄື ກະສັດ ດາວິດ ຈັ່ງໄດ້ເວົ້າໄວ້ເຖິງເພິ່ນວ່າ 'ຜູ້ຂ້າໄດ້ເຫັນພຣະຜູ້ເປັນເຈົ້າມາ
ກ່ອນ ຢູ່ຕໍ່ໜ້າຜູ້ຂ້າສະເໝີ ຄືເພິ່ນຢູ່ເບື້ອງຂວາຂອງຜູ້ຂ້າ ຜູ້ຂ້າຈັ່ງຊິບໍ່ໄດ້ຫວັ່ນ-
ໄຫວເລີຍ
2:26 ຈັ່ງຊັ້ນ ຈິດໃຈຂອງຜູ້ຂ້າຈັ່ງຍິນດີ ກັບລີ້ນໃນປາກຂອງຜູ້ຂ້າຈັ່ງມ່ວນຊື່ນ
ຫລາຍກວ່ານັ້ນອີກ ຕົນໂຕຂອງຜູ້ຂ້າຊິພັກພິງຢູ່ໃນຄວາມຫວັງນຳ
2:27 ໂດຍວ່າທ່ານຊິບໍ່ປະຖິ້ມຈິດວິນຍານຂອງຜູ້ຂ້າໄວ້ໃນແດນມໍລະນາ ທັງທ່ານຊິ
ບໍ່ຍອມໃຫ້ຜູ້ບໍລິສຸດຂອງທ່ານທີ່ຊິເຫັນຄວາມເປື່ອຍເນົ່າໄປນຳ
2:28 ທ່ານໄດ້ໂຜດໃຫ້ຜູ້ຂ້າຮູ້ຈັກຫົນທາງຊີວິດ ແລ້ວທ່ານຊິໂຜດໃຫ້ຜູ້ຂ້າເຕັມໄປ
ດ້ວຍຄວາມປິຕິຍິນດີຕໍ່ໜ້າທ່ານນຳ'
2:29 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ຂ້ອຍຈັ່ງຂໍອະນຸຍາດເວົ້ານຳພວກເຈົ້າຢ່າງ
ໂປ່ງໃສເຖິງກະສັດ ດາວິດ ປູ່ທວດຂອງພວກເຮົາວ່າ ລາວ ໄດ້ຕາຍໄປແລ້ວ
ພ້ອມກັບຖືກຝັງໄວ້ນຳ ແລ້ວຢູ່ກັບພວກເຮົາ ຊຶ່ງຍັງຢູ່ໃນອຸບໂມງຂອງ ລາວ ຈົນ
ຮອດຄູ່ມື້ນີ້
2:30 ຈັ່ງຊັ້ນ ຊຶ່ງ ລາວ ໄດ້ເປັນຜູ້ເປັນປາກເປັນສຽງຜູ້ໜຶ່ງ ແລ້ວຈັ່ງຮູ້ວ່າພຣະເຈົ້າໄດ້
ສັນຍາໄວ້ກັບ ລາວ ໂດຍໃຫ້ຄຳໝັ້ນສັນຍາໄວ້ວ່າ ຊິມີຜູ້ໜຶ່ງອອກມາຈາກແອວ
ຂອງ ລາວ ຄືຊິໄດ້ເກີດຕາມເຊື້ອສາຍເນື້ອໜັງຂອງ ລາວ ແລ້ວພຣະເຈົ້າເພິ່ນກໍຊິ
ແຕ່ງຕັ້ງຜູ້ນັ້ນ ຄື ພຣະຄຣິດ ໃຫ້ມາປະທັບຢູ່ບັນລັງຂອງ ລາວ ຕໍ່
2:31 ກະສັດ ດາວິດ ນັ້ນກໍໄດ້ລ່ວງຮູ້ລ່ວງເຫັນເຫດການນີ້ມາກ່ອນແລ້ວ ຈັ່ງໄດ້ເວົ້າ
ເຖິງການມີຊີວິດເປັນຂຶ້ນມາຈາກຕາຍຂອງ ພຣະຄຣິດ ວ່າ 'ຈິດວິນຍານຂອງເພິ່ນ
ຊິບໍ່ໄດ້ຖືກປະຖິ້ມໄວ້ໃນແດນມໍລະນາ ທັງເນື້ອໜັງຂອງເພິ່ນຊິບໍ່ໄດ້ເປື່ອຍເນົ່າໄປ
ນຳ'
2:32 ຄື ພຣະເຢຊູ ນີ້ ພຣະເຈົ້າໄດ້ບັນດານໃຫ້ມີຊີວິດເປັນຂຶ້ນມາຈາກຕາຍແລ້ວ ຊຶ່ງ
ໝູ່ພວກເຮົາຈັ່ງໄດ້ເປັນຫຼັກຖານພະຍານໃນເລື່ອງນີ້ນຳ

2:33 ຈັ່ງຊັ້ນ ບັດເພິ່ນໄດ້ຮັບການຍົກຂຶ້ນໄປປະທັບຢູ່ເບື້ອງຂວາຂອງພຣະເຈົ້າຜູ້
ເປັນພໍ່ ຜູ້ໄດ້ແຕ່ງຕັ້ງເພິ່ນຂຶ້ນນັ້ນແລ້ວ ກັບເນື່ອງຈາກວ່າເພິ່ນໄດ້ຮັບພຣະສັນຍາ
ເລື່ອງ ພຣະວິນຍານ ນັ້ນຈາກພຣະເຈົ້າຜູ້ເປັນພໍ່ນຳ ເພິ່ນຈັ່ງໄດ້ຫຸ້ມເທເຫດການນີ້
ລົງມາ ຢ່າງທີ່ພວກເຈົ້າໄດ້ຍິນໄດ້ເຫັນແລ້ວ
2:34 ຄືກະສັດ ດາວິດ ບໍ່ໄດ້ຂຶ້ນໄປປະທັບເທິງຟ້າສະຫວັນດອກ ແຕ່ ລາວ ເອງໄດ້
ເວົ້າວ່າ ‘ອົງພຣະຜູ້ເປັນເຈົ້າໄດ້ເວົ້າກັບພຣະຜູ້ເປັນເຈົ້າ ນາຍຊີວິດຂອງຜູ້ຂ້າວ່າ
“ເຊີນມານັ່ງຢູ່ເບື້ອງຂວາຂອງເຮົາເຖີ້ນ
2:35 ຈົນກວ່າເຮົາຊິເຮັດໃຫ້ສັດຕູຂອງເຈົ້າເປັນທີ່ພັກຕີນຂອງເຈົ້າ”’
2:36 ຈັ່ງຊັ້ນ ຂໍໃຫ້ຊົນຊາດ ອິສະຣາເອນ ທັງໝົດຮູ້ຄັກແນ່ວ່າ ພຣະເຈົ້າໄດ້ແຕ່ງຕັ້ງ
ພຣະເຢຊູ ນີ້ຂຶ້ນໃຫ້ເປັນທັງພຣະຜູ້ເປັນເຈົ້າ ກັບເປັນ ພຣະຄຣິດ ຄືພຣະຜູ້ໂຜດ
ນັ້ນເອງ ແມ່ນຜູ້ທີ່ພວກເຈົ້າໄດ້ຄຶງປະຫານນັ້ນເນາະ”
2:37 ບັດພໍຄົນທັງຫລາຍຢູ່ນັ້ນໄດ້ຍິນຄວາມເວົ້ານີ້ ພວກເຂົາຈັ່ງຮູ້ສຶກຖືກແທງໃຈ-
ດຳ ຈັ່ງໄດ້ຂໍຮ້ອງກັບ ເປໂຕ ພ້ອມກັບພວກທູດພິເສດຜູ້ອື່ນໆ ວ່າ “ທ່ານພີ່ນ້ອງ
ທັງຫລາຍເອີຍ ພວກເຮົາຊິເຮັດຈັ່ງໃດດີບັດນີ້”
2:38 ສ່ວນ ເປໂຕ ໄດ້ບອກພວກເຂົາວ່າ “ໃຫ້ກັບໃຈໃໝ່ໝົດຄູ່ຄົນເດີ້ ແລ້ວຈັ່ງຮັບ
ການຈຸ່ມນໍ້າໃນພຣະນາມຂອງ ພຣະເຢຊູຄຣິດ ເພື່ອພຣະເຈົ້າຊິໄດ້ຍົກໂທດໃຫ້
ອະໄພຄວາມຜິດບາບຂອງພວກເຈົ້າ ແລ້ວພວກເຈົ້າຊິໄດ້ຮັບຂອງຂວັນທາງ
ພຣະວິນຍານ
2:39 ຍ້ອນວ່າຄຳໝັ້ນສັນຍານັ້ນ ມີຢູ່ເພື່ອພວກເຈົ້າ ກັບລູກຫລານຂອງພວກເຈົ້າ
ນຳ ພ້ອມທັງຄົນທັງຫລາຍທີ່ຢູ່ໄກ ຮອດໝົດຄູ່ຄົນທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງເຮົາຊິໄດ້ເອີ້ນໄດ້ເຊີນມາ”
2:40 ແລ້ວ ເປໂຕ ໄດ້ເວົ້າອີກຫລາຍອັນຫລາຍແນວ ເປັນຄຳພະຍານກັບຄຳເຕືອນ
ສະຕິວ່າ “ໃຫ້ພວກເຈົ້າລອດພົ້ນຈາກຍຸກຄົດໂກງບິດເບືອນນີ້ເດີ້”
2:41 ເວົ້າແລ້ວ ຄົນທັງຫລາຍທີ່ຮັບຟັງຄຳຂອງ ເປໂຕ ໂດຍຄວາມຍິນດີ ກໍໄດ້ຮັບ
ການຈຸ່ມນໍ້ານຳ ແລ້ວໃນມື້ນັ້ນມີຈຳນວນຄົນເຂົ້າຮັບເຊື່ອເພີ່ມອີກປະມານສາມພັນ
ຄົນ

2:42 ແລ້ວພວກເຂົາໄດ້ຕັ້ງໝັ້ນຢູ່ໃນຫລັກຄຳສອນຂອງພວກທູດພິເສດ ກັບໃນ
ການສະໜິດສະໜົມສາມັກຄີຮ່ວມກັນ ທັງໃນການຫັກເຂົ້າຈີ່ໃນພິທີມະຫາສະນິດ
ພ້ອມໃນການອະທິຖານເວົ້ານຳພຣະເຈົ້າ
2:43 ແລ້ວມີຄວາມຢ້ານຢໍາພຣະເຈົ້າໄດ້ເກີດໃນຈິດໃຈຂອງຄູ່ຄົນ ເນື່ອງຈາກວ່າມີ
ເຫດການມະຫັດສະຈັນກັບເຄື່ອງໝາຍອັນສຳຄັນຕ່າງໆ ໄດ້ເກີດຂຶ້ນໂດຍຜ່ານ
ທາງພວກທູດພິເສດນັ້ນ
2:44 ແລ້ວຜູ້ຄົນທັງໝົດທີ່ໄດ້ເຊື່ອຢູ່ຫັ້ນ ໄດ້ເປັນນໍ້າໜຶ່ງໃຈດຽວກັນ ຖືກັນວ່າຄູ່ຢ່າງ
ທີ່ເຂົາມີເປັນຂອງກາງ
2:45 ແລ້ວເຂົາຈັ່ງຂາຍຊັບສົມບັດ ເຂົ້າຂອງເງິນທອງ ມາແບ່ງປັນກັນໃຫ້ຄູ່ຄົນຕາມ
ທີ່ແຕ່ລະຄົນມີຄວາມຕ້ອງການ
2:46 ແລ້ວພວກເຂົາໄດ້ຮ່ວມກັນຢູ່ໃນພຣະວິຫານຄູ່ມື້ໆ ກັບໄດ້ຮ່ວມຫັກເຂົ້າຈີ່ກິນ
ເຂົ້າປາອາຫານຕາມບ້ານຂອງແຕ່ລະຄົນ ໂດຍຄວາມຊົມຊື່ນຍິນດີ ກັບໂດຍ
ຄວາມເປັນນໍ້າໜຶ່ງໃຈດຽວກັນ
2:47 ນີ້ກໍດ້ວຍການຍົກຍ້ອງສັນລະເສີນພຣະເຈົ້າ ແລ້ວຕ່າງຄົນຕ່າງກໍເຫັນດີເຫັນ
ຊອບນຳພວກເຂົາ ແລ້ວພຣະຜູ້ເປັນເຈົ້າໄດ້ເພີ່ມຈຳນວນຜູ້ຄົນໃນກຸ່ມຜູ້ເຊື່ອ ຜູ້ທີ່
ພວມຊິຮັບຄວາມລອດພົ້ນນັ້ນ

## ກິດຈະການ ບົດທີ 3

3:1 ບັດນີ້ ເປໂຕ ກັບ ໂຢຮັນ ໄດ້ພ້ອມກັນຂຶ້ນໄປເຂົ້າພຣະວິຫານ ໃນເວລາຮ່ວມ
ກຸ່ມອະທິຖານ ເປັນຊົ່ວໂມງທີ່ເກົ້າ (ບ່າຍສາມໂມງ)
3:2 ແລ້ວໄດ້ມີຜູ້ຊາຍຄົນໜຶ່ງເປັນງ່ອຍມາແຕ່ທ້ອງແມ່ ຈັ່ງຕ້ອງມີຄົນຊ່ອຍຫາມເຂົາ
ຢູ່ຄູ່ມື້ ຂຶ້ນໄປວາງລົງໄວ້ຢູ່ຂ້າງປະຕູທີ່ເອີ້ນກັນວ່າປະຕູງາມ ເພື່ອເຂົາຊິໄດ້ຂໍທານ
ນຳຄົນຜູ້ທີ່ຂຶ້ນໄປເຂົ້າພຣະວິຫານ
3:3 ຄົນນັ້ນພໍເຫັນ ເປໂຕ ກັບ ໂຢຮັນ ພວມຊິເຂົ້າໄປໃນພຣະວິຫານ ກໍໄດ້ຂໍທານນຳ
ລາວ
3:4 ສ່ວນ ເປໂຕ ກັບ ໂຢຮັນ ກໍຈ້ອງຕາເບິ່ງເຂົາແລ້ວບອກວ່າ “ໃຫ້ເບິ່ງພວກເຮົາ
ເດີ້”

3:5 ຄົນຂໍທານນັ້ນກໍເລີຍເຮັດຕາມ ຄຶດວ່າຊິໄດ້ອີຫຍັງຈາກພວກ ລາວ
3:6 ແຕ່ ເປໂຕ ເວົ້າວ່າ “ເງິນກັບທອງຂ້ອຍກໍບໍ່ມີດອກ ແຕ່ແນວທີ່ຂ້ອຍມີຢູ່ຂ້ອຍຊິ
ໃຫ້ເຈົ້າ ຄືໃນພຣະນາມຂອງ ພຣະເຢຊູຄຣິດ ຊາວ ນາຊາເຣັດ ໃຫ້ລຸກຂຶ້ນຍ່າງເດີ້”
3:7 ເວົ້າແລ້ວ ເປໂຕ ກໍຈັບມືຂວາຂອງເຂົາຊ່ອຍຊູຂຶ້ນ ແລ້ວໃນຫວ່າງນັ້ນພໍດີ ຕີນ
ພ້ອມທັງຂໍ້ຕີນຂອງເຂົາແຂງແຮງຂຶ້ນກັບໝ້ອງ
3:8 ແລ້ວເຂົາຈັ່ງໂດດຂຶ້ນຢືນກັບຍ່າງເຂົ້າໄປໃນພຣະວິຫານພ້ອມ ເປໂຕ ກັບ ໂຢ-
ຮັນ ທັງຍ່າງທັງເຕັ້ນທັງສັນລະເສີນພຣະເຈົ້າຢູ່ຫັ້ນ
3:9 ບັດນີ້ ໝົດຄູ່ຄົນໄດ້ເຫັນເຂົາຍ່າງກັບສັນລະເສີນພຣະເຈົ້າ
3:10 ແລ້ວພວກຄົນຢູ່ນັ້ນຈັ່ງນຶກອອກໄດ້ວ່າ ເປັນຄົນເປ້ຍທີ່ເຄີຍນັ່ງຂໍທານຢູ່ປະຕູ
ງາມຂອງພຣະວິຫານ ເຂົາຈັ່ງພາກັນສັງເກດໃຈເປັນຕາງຶດໃນເຫດການທີ່ເກີດ-
ຂຶ້ນກັບຄົນຜູ້ນັ້ນ
3:11 ບັດພໍຄົນເປ້ຍທີ່ໄດ້ຮັບການປົວນັ້ນ ກອດ ເປໂຕ ກັບ ໂຢຮັນ ໄວ້ ພວກຄົນຢູ່
ນັ້ນກໍແລ່ນໄປຫາພວກເຂົາຕອນຢູ່ໃຕ້ຫລັງຄາລະບຽງຂອງພຣະວິຫານທີ່ເອີ້ນກັນ
ວ່າ ລະບຽງຂອງ ໂຊໂລໂມນ ຍ້ອນພວກເຂົາສົງໄສເປັນຕາງຶດຫລາຍ
3:12 ບັດ ເປໂຕ ຫລຽວເຫັນຄົນພວກນັ້ນກໍເລີຍບອກເຂົາວ່າ “ຊົນຊາດ ອິສະຣາ-
ເອນ ເອີຍ ເປັນຫຍັງພວກເຈົ້າພາກັນແປກໃຈເປັນຕາງຶດໃນເລື່ອງຄົນຜູ້ນີ້ ແລ້ວ
ຈັ່ງຈ້ອງເບິ່ງພວກເຮົາຍ້ອນຫຍັງ ຄືກັບວ່າພວກເຮົາສາມາດປົວຄົນນີ້ເຊົາງ່ອຍ
ເປັນດີໄດ້ ໂດຍລິດກຳລັງຫລືຄວາມດີຂອງພວກເຮົາເອງ
3:13 ພຣະເຈົ້າຂອງ ອັບຣາຮາມ ອີຊາກ ກັບ ຢາໂຄບ ຄືພຣະເຈົ້າຂອງພວກພໍ່
ຕະກູນຂອງເຮົາ ເພິ່ນໄດ້ໂຜດໃຫ້ກຽດ ພຣະເຢຊູ ຜູ້ເປັນ ພຣະບຸດ ຂອງເພິ່ນ ຊຶ່ງ
ພວກເຈົ້າໄດ້ມອບໄວ້ໃຫ້ຖືກຄຶງປະຫານ ກັບໄດ້ປະຕິເສດຄັດຄ້ານເພິ່ນຕໍ່ໜ້າ ປີ-
ລາດ ບັດ ລາວ ຕັ້ງໃຈຊິປ່ອຍເພິ່ນຢູ່ແລ້ວ
3:14 ຄືແມ່ນພວກເຈົ້ານັ້ນແລ້ວ ໄດ້ປະຕິເສດເພິ່ນຜູ້ບໍລິສຸດຊຶ່ງເປັນຜູ້ທ່ຽງທຳແທ້
ແລ້ວຈັ່ງໄດ້ຂໍຮ້ອງໃຫ້ ປີລາດ ປ່ອຍຄາດຕະກອນຜູ້ໜຶ່ງອອກໄປແທນ
3:15 ຈັ່ງໄດ້ຂ້າພຣະອົງຜູ້ເປັນຈອມ ລາຊາ ແຫ່ງຊີວິດ ຜູ້ທີ່ພຣະເຈົ້າໄດ້ກະລຸນາໃຫ້-
ເປັນຂຶ້ນມາຈາກຕາຍແລ້ວ ຊຶ່ງພວກເຮົາໄດ້ເປັນຫລັງຖານພະຍານໃນເລື່ອງນີ້

3:16 ແລ້ວໂດຍຄວາມເຊື່ອວາງໃຈໃນພຣະນາມຂອງເພິ່ນນັ້ນ ຄົນນີ້ທີ່ພວກເຈົ້າ
ເຫັນຮູ້ກັນຢູ່ ເອີ້ ໂດຍຄວາມເຊື່ອໃນພຣະອົງນັ້ນເອງເປັນເຫດໃຫ້ຄົນນີ້ເຊົາງ່ອຍ
ເປັນດີໄດ້ແລ້ວຢູ່ຕໍ່ໜ້າພວກເຈົ້າຄູ່ຄົນ
3:17 ແລ້ວບັດນີ້ ພີ່ນ້ອງທັງຫລາຍເອີຍ ຂ້ອຍຮູ້ວ່າພວກເຈົ້າໄດ້ເຮັດແນວນັ້ນດ້ວຍບໍ່
ຮູ້ເລື່ອງຮູ້ຮາວອີຫຍັງ ພ້ອມທັງຄະນະຜູ້ປົກຄອງຂອງພວກເຈົ້າກໍຄືກັນ
3:18 ແຕ່ວ່າເຫດການແນວໝູ່ນັ້ນ ທີ່ພຣະເຈົ້າໄດ້ປະກາດໄວ້ລ່ວງໜ້າກ່ອນ ຜ່ານ
ທາງປາກຂອງຜູ້ເປັນປາກເປັນສຽງຂອງເພິ່ນ ວ່າ ພຣະຄຣິດ ຕ້ອງທົນທຸກທໍລະ-
ມານແທນປວງຊົນ ຊຶ່ງເພິ່ນໄດ້ເຮັດໃຫ້ສຳເລັດແລ້ວ
3:19 ຈັ່ງຊັ້ນ ໃຫ້ພວກເຈົ້າຫັນມາກັບໃຈໃໝ່ເດີ້ ເພື່ອຊິໄດ້ຮັບການລົບລ້າງຄວາມ
ຜິດບາບໃຫ້ໝົດໄປ ຈັ່ງຊິໄດ້ມີຍາມອັນຊື່ນບານຢູ່ເຢັນເປັນສຸກຕໍ່ໜ້າພຣະຜູ້ເປັນ-
ເຈົ້າໃນພາຍໜ້າ
3:20 ເພື່ອເພິ່ນຊິໄດ້ໃຊ້ ພຣະເຢຊູຄຣິດ ມາ ຄືຜູ້ນັ້ນທີ່ເຄີຍໄດ້ປະກາດໄວ້ໃຫ້ພວກ
ເຈົ້າຮູ້ມາກ່ອນແລ້ວ
3:21 ແມ່ນຜູ້ນັ້ນທີ່ເມືອງສະຫວັນຊິຕ້ອງຮັບໄວ້ກ່ອນ ຈົນຮອດຍາມທີ່ພຣະເຈົ້າຊິໃຫ້
ໝົດຄູ່ອັນຄູ່ແນວກັບເປັນດີຄືເກົ່າ ຕາມທີ່ພຣະເຈົ້າໄດ້ກ່າວໄວ້ນັ້ນ ຜ່ານທາງປາກ
ຂອງຜູ້ເປັນປາກເປັນສຽງຂອງເພິ່ນ ຕັ້ງແຕ່ເລີ່ມສ້າງໂລກມາ
3:22 ຄື ທ່ານ ໂມເຊ ໄດ້ກ່າວໄວ້ອີຫລີໃຫ້ພວກພໍ່ຕະກູນນັ້ນວ່າ ‘ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງພວກເຈົ້ານັ້ນ ຊິໂຜດໃຫ້ມີຜູ້ເປັນປາກເປັນສຽງຜູ້ໜຶ່ງຄືກັນກັບເຮົານີ້
ອອກມາຈາກພວກພີ່ນ້ອງຂອງເຈົ້າ ແລ້ວໃຫ້ພວກເຈົ້າຟັງເພິ່ນໃນໝົດຄູ່ແນວທີ່
ເພິ່ນຊິເວົ້ານັ້ນ
3:23 ແລ້ວມັນຊິເປັນໄປທີ່ວ່າ ຜູ້ໜຶ່ງຜູ້ໃດທີ່ບໍ່ໄດ້ຮັບຟັງຜູ້ເປັນປາກເປັນສຽງຜູ້ນັ້ນ
ເຂົາຊິຕ້ອງຖືກຕັດຂາດໃຫ້ພິນາດໄປອອກຈາກໝູ່ປະຊາຊົນ’
3:24 ເອີ້ແມ່ນ ແລ້ວຜູ້ເປັນປາກເປັນສຽງຄູ່ຄົນ ຕັ້ງແຕ່ ຊາມູເອນ ເປັນລຳດັບມາ ກໍ-
ໄດ້ເວົ້າເປັນສຽງດຽວກັນເປັນຄຳທຳນາຍເຖິງຍາມນັ້ນທີ່ຊິມາຮອດ
3:25 ແລ້ວພວກເຈົ້າໄດ້ເປັນລູກຫລານຂອງຜູ້ເປັນປາກເປັນສຽງໝູ່ນັ້ນ ກັບຂອງ
ຄຳໝັ້ນສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ກັບພວກພໍ່ຕະກູນຂອງເຮົານຳ ຕາມທີ່ໄດ້ເວົ້າ

ກັບພໍ່ ອັບຣາຮາມ ວ່າ ‘ແລ້ວໝູ່ຊົນທັງຫລາຍທົ່ວແຜ່ນດິນໂລກຊິໄດ້ຮັບພົນເປັນ
ສຸກຍ້ອນເຊື້ອສາຍຂອງເຈົ້າ’
3:26 ໂດຍວ່າ ຫລັງຈາກພຣະເຈົ້າໄດ້ໂຜດໃຫ້ ພຣະເຢຊູ ເປັນຂຶ້ນມາຈາກຕາຍນັ້ນ
ພຣະເຈົ້າໄດ້ໃຊ້ ພຣະບຸດ ໃຫ້ມາຫາພວກເຈົ້າກ່ອນ ອວຍພອນພວກເຈົ້າໂດຍໃຫ້
ຄູ່ຄົນໃນພວກເຈົ້າກັບໃຈຫັນອອກມາຈາກທາງຊົ່ວຂອງໂຕ”

## ກິດຈະການ ບົດທີ 4

4:1 ແລ້ວບັດ ເປໂຕ ກັບ ໂຢຮັນ ພວມເວົ້ານຳພວກຄົນຢູ່ຫັ້ນ ພໍດີພວກປະໂລຫິດ
ກັບຫົວໜ້າຮັກສາການໃນພຣະວິຫານ ກັບພວກຄະນະ ຊາດູກາຍ ໄດ້ມາຫາເຂົາ
4:2 ຄືພວກຄົນໝູ່ນັ້ນຂັດເຄືອງບໍ່ພໍໃຈຫລາຍ ຍ້ອນເຂົາທັງສອງຄົນໄດ້ສອນ ກັບ
ໄດ້ປະກາດເລື່ອງການເປັນຂຶ້ນມາຈາກຕາຍໂດຍທາງ ພຣະເຢຊູ ໃຫ້ຄົນຢູ່ຫັ້ນຟັງ
4:3 ພວກຄົນໝູ່ນັ້ນເລີຍຈັບ ເປໂຕ ກັບ ໂຢຮັນ ເອົາໄປຂັງໄວ້ໃນຄຸກຈົນຮອດມື້ອື່ນ
ເຊົ້າ ຍ້ອນວ່າຕອນນັ້ນມັນຄ່ຳແລ້ວ
4:4 ຈັ່ງໃດກໍຕາມ ຫລາຍຄົນທີ່ໄດ້ຟັງ ພຣະຄຳ ນັ້ນໄດ້ເຊື່ອ ນັບແຕ່ຈຳນວນຜູ້ຊາຍ
ໄດ້ປະມານຫ້າພັນຄົນ
4:5 ບັດພໍຮອດມື້ອື່ນເຊົ້າແລ້ວ ພວກຜູ້ປົກຄອງກັບພວກຜູ້ຫລັກຜູ້ໃຫຍ່ຂອງບ້ານ-
ເມືອງ ກັບພວກນັກທຳ
4:6 ພ້ອມກັບ ອັນນາ ມະຫາປະໂລຫິດ ກັບ ກາຍະຟາ ກັບ ໂຢຮັນ ກັບ ອາເລັກ-
ຊັນໂດ ພ້ອມກັບຄົນອື່ນໆ ຜູ້ທີ່ເປັນຍາດກັນກັບມະຫາປະໂລຫິດນັ້ນ ໄດ້ເຂົ້າ
ຮ່ວມປະຊຸມກັນໃນເມືອງ ເຢຣູຊາເລັມ
4:7 ແລ້ວບັດພໍພວກເຂົາໃຫ້ ເປໂຕ ກັບ ໂຢຮັນ ມາຢືນຢູ່ຫວ່າງກາງທີ່ປະຊຸມນັ້ນ ຈັ່ງ
ຖາມສອບສວນເຂົາວ່າ “ພວກເຈົ້າໄດ້ເຮັດແນວນີ້ໂດຍສິດທິອຳນາດຫລືໃນນາມ
ຂອງຜູ້ໃດ”
4:8 ບັດນີ້ ເປໂຕ ທີ່ປະກອບດ້ວຍລິດ ພຣະວິນຍານ ໄດ້ເວົ້າໃຫ້ພວກເຂົາຟັງວ່າ
“ທ່ານຜູ້ປົກຄອງບ້ານເມືອງ ກັບພວກຜູ້ຫລັກຜູ້ໃຫຍ່ຂອງຊາວ ອິສະຣາເອນ ເອີຍ
4:9 ໃນມື້ນີ້ ຄັ່ນພວກເຈົ້າຊິພິຈາລະນາຕັດສິນພວກເຮົາເຖິງການເຮັດດີໂດຍໄດ້
ຊ່ອຍຄົນເຈັບນີ້ ວ່າເຮັດຈັ່ງໃດທີ່ເຂົາເຊົາງ່ອຍເປັນດີໄດ້ນັ້ນ

4:10 ກໍໃຫ້ພວກເຈົ້າກັບຊົນຊາດ ອິສະຣາເອນ ຄູ່ຄົນຮູ້ກັນວ່າ ໂດຍພຣະນາມຂອງ
ພຣະເຢຊູຄຣິດ ຊາວ ນາຊາເຣັດ ນັ້ນ ຊຶ່ງເປັນຜູ້ທີ່ພວກເຈົ້າໄດ້ຄຶງປະຫານ ທີ່
ພຣະເຈົ້າໄດ້ກະລຸນາໃຫ້ເປັນຂຶ້ນມາຈາກຕາຍແລ້ວນັ້ນ ໂດຍພຣະນາມຂອງເພິ່ນ
ເອງຜູ້ຊາຍຄົນນີ້ຈັ່ງໄດ້ເຊົາງ່ອຍເປັນດີແລ້ວ ຈັ່ງຢືນຢູ່ຕໍ່ໜ້າພວກເຈົ້າຢູ່ດຽວນີ້
4:11 ເພິ່ນຜູ້ນີ້ເປັນມະຫາສິລານັ້ນ ທີ່ພວກເຈົ້າໃນຖານະວ່າເປັນຊ່າງກໍ່ຕຶກ ໄດ້ປະ-
ຕິເສດຖິ້ມ ແຕ່ຜູ້ນີ້ໄດ້ກັບກາຍເປັນມະຫາສິລາມຸມເອກແລ້ວ (ຕາມຄຳທຳນາຍ
ນັ້ນ)
4:12 ຄືໃນຜູ້ອື່ນຄວາມລອດພົ້ນກໍບໍ່ມີເລີຍ ຍ້ອນວ່ານາມອື່ນໆ ທີ່ໃຫ້ຄົນເຮົາທັງ-
ຫລາຍລອດພົ້ນໄດ້ ພຣະເຈົ້າບໍ່ໂຜດໃຫ້ມີໃນລະຫວ່າງຄົນທັງປວງທົ່ວໃຕ້ຟ້າ”
4:13 ແລ້ວບັດພໍພວກເຂົາເຫັນຄວາມກ້າຫານຂອງ ເປໂຕ ກັບ ໂຢຮັນ ກັບຮູ້ວ່າ
ສອງຄົນນີ້ບໍ່ມີການສຶກສາຈັ່ງມີຄວາມຮູ້ນ້ອຍ ພວກເຂົາກໍເປັນຕາງຶດຫລາຍ ແລ້ວ
ຈັ່ງນຶກອອກວ່າສອງຄົນນີ້ເຄີຍຢູ່ນຳ ພຣະເຢຊູ
4:14 ແລ້ວບັດເຂົາແນມເບິ່ງຄົນທີ່ເຊົາງ່ອຍເປັນດີນັ້ນ ໄດ້ຢືນຢູ່ນຳ ເປໂຕ ກັບ ໂຢ-
ຮັນ ພວກເຂົາກໍບໍ່ສາມາດຕິຕຽນຄັດຄ້ານຫຍັງໄດ້ເລີຍ
4:15 ແຕ່ບັດພໍພວກເຂົາສັ່ງໃຫ້ ເປໂຕ ກັບ ໂຢຮັນ ອອກໄປຈາກທີ່ປະຊຸມແລ້ວ ເຂົາ
ຈັ່ງປຶກສາຫາລືກັນ
4:16 ວ່າ “ພວກເຮົາຊິເຮັດຈັ່ງໃດດີກັບຄົນໝູ່ນີ້ນໍ້ ຄືແທ້ຈິງແລ້ວ ມີເຫດການມະຫັດ-
ສະຈັນໄດ້ເປັນໄປຢ່າງຊັດເຈນຜ່ານທາງພວກເຂົາແລ້ວ ທີ່ໝົດຄູ່ຄົນຢູ່ໃນເມືອງ
ເຢຣູຊາເລັມ ໄດ້ຮັບຮູ້ກັນແລ້ວ ຊຶ່ງພວກເຮົາບໍ່ສາມາດປະຕິເສດໄດ້ເລີຍ
4:17 ແຕ່ເພື່ອປິດງຳເລື່ອງນີ້ໄວ້ບໍ່ໃຫ້ແພ່ອອກໄປຊອດຫູຄົນອີກ ຕົກລົງໃຫ້ເຮົາຂົ່ມ-
ຂູ່ເຂົາໄວ້ຢ່າງເດັດຂາດ ຫ້າມບໍ່ໃຫ້ອ້າງຊື່ນີ້ໃຫ້ຜູ້ໃດຟັງອີກເລີຍ”
4:18 ຕົກລົງກັນແລ້ວ ພວກເຂົາຈັ່ງເອີ້ນ ເປໂຕ ກັບ ໂຢຮັນ ເຂົ້າມາອີກ ແລ້ວຫ້າມໄວ້
ຢ່າງເດັດຂາດ ບໍ່ໃຫ້ເວົ້າຫລືສອນໃນພຣະນາມຂອງ ພຣະເຢຊູ ຕໍ່ໄປອີກເລີຍ
4:19 ສ່ວນ ເປໂຕ ກັບ ໂຢຮັນ ເລີຍຕອບພວກເຂົາວ່າ “ການທີ່ຊິຟັງພວກເຈົ້າແທນທີ່
ຊິຟັງພຣະເຈົ້າ ອັນໃດຊິຖືກຕ້ອງກວ່າກັນໃນສາຍຕາຂອງພຣະເຈົ້າ ຂໍໃຫ້ພວກ
ເຈົ້າພິຈາລະນາເອົາເອງເດີ້

4:20 ຄືເຮົາບໍ່ສາມາດທີ່ຊິອຳໄວ້ ໃນແບວຕ່າງໆ ທີ່ເຮົາໄດ້ເຫັນກັບໄດ້ຍິນເລີຍ”
4:21 ບັດພໍພວກເຂົາໄດ້ຂູ່ ເປໂຕ ກັບ ໂຢຮັນ ຊ້ຳອີກແລ້ວກໍໄດ້ປ່ອຍໄປ ຄືເຂົາບໍ່ສາ-
ມາດຈັບຜິດອີຫຍັງພໍທີ່ຊິລົງໂທດ ຍ້ອນວ່າພວກເຂົາເກງໃຈຊາວບ້ານຊາວເມືອງ
ຢ້ານເຂົາຊິຄັດຄ້ານນຳ ຄືຄົນທັງຫລາຍໄດ້ສັນລະເສີນຍົກຍ້ອງພຣະເຈົ້າໂດຍ
ເຫດການທີ່ເປັນໄປຫັ້ນ
4:22 ນອກຈາກຫັ້ນ ຄົນທີ່ໄດ້ເຊົາງ່ອຍເປັນດີໂດຍເຫດການມະຫັດສະຈັນນັ້ນອາຍຸ
ໄດ້ສີ່ສິບປີແລ້ວ
4:23 ບັດຖືກປ່ອຍໄປແລ້ວ ເປໂຕ ກັບ ໂຢຮັນ ເລີຍໄປຫາໝູ່ພວກຂອງ ລາວ ອີກ
ຈັ່ງໄດ້ລາຍງານເຖິງເລື່ອງທັງໝົດທີ່ຄະນະຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້-
ໃຫຍ່ຂອງບ້ານເມືອງທີ່ເວົ້າກັບພວກ ລາວ
4:24 ແລ້ວພໍແຕ່ໝູ່ໄດ້ຟັງ ເຂົາຈັ່ງພ້ອມໃຈອອກສຽງກັນເວົ້າຕໍ່ພຣະເຈົ້າວ່າ “ສາທຸ
ການ ພຣະຜູ້ເປັນເຈົ້າ ເອີຍ ທ່ານເປັນພຣະເຈົ້າອີຫລີ ແມ່ນຜູ້ທີ່ສ້າງຟ້າສະຫວັນ
ກັບແຜ່ນດິນໂລກ ກັບທະເລ ພ້ອມກັບໝົດຄູ່ອັນຄູ່ແນວທີ່ມີຢູ່ໃນຫັ້ນ
4:25 ຊຶ່ງພຣະຜູ້ເປັນເຈົ້າໄດ້ເວົ້າໄວ້ມາແລ້ວໂດຍຜ່ານທາງປາກຂອງກະສັດ ດາວິດ
ຜູ້ຮັບໃຊ້ຂອງທ່ານວ່າ ‘ເປັນຫຍັງພວກຄົນຕ່າງຊາດຈັ່ງອາລະວາດກັນໃຫຍ່ ກັບ
ພວກຊົນຊາດຕ່າງໆ ຄິດຮວມກັນຊົ່ວໃນໃຈແນວທີ່ບໍ່ເປັນສາລະ
4:26 ຄືກະສັດທັງຫລາຍເທິງແຜ່ນດິນໂລກໄດ້ຢືນຂຶ້ນ ກັບພວກຫົວໜ້າປົກຄອງໄດ້
ຮ່ວມຫົວກັນ ຕັ້ງໂຕຕໍ່ຕ້ານພຣະຜູ້ເປັນເຈົ້າກັບ ພຣະຄຣິດ ພຣະຜູ້ໂຜດຂອງເພິ່ນ
ນຳ’
4:27 ຄືແທ້ຈິງແລ້ວ ທັງກະສັດ ເຮໂຣດ ກັບຜູ້ບັງຄັບບັນຊາ ປົນຕຽວ ປີລາດ ກັບ
ພວກຊາວຕ່າງຊາດ ພ້ອມທັງຊົນຊາດ ອິສະຣາເອນ ນຳ ໄດ້ມາໂຮມກັນຕໍ່ຕ້ານ
ພຣະເຢຊູ ພຣະບຸດ ຜູ້ບໍລິສຸດຂອງທ່ານຕາມທີ່ທ່ານອະນຸຍາດໃຫ້ພວກເຂົາ
4:28 ເພື່ອພວກເຂົາທັງຫລາຍຊິເຮັດສາລະພັດແນວ ຕາມທີ່ມືຂອງທ່ານໄດ້ວາງ
ແຜນການໄວ້ ຊຶ່ງໄດ້ກຳນົດໄວ້ລ່ວງໜ້າກ່ອນແລ້ວ ໄດ້ອະນຸຍາດໃຫ້ພວກເຂົາ
ເຮັດ

4:29 ແລ້ວບັດນີ້ ພຣະຜູ້ເປັນເຈົ້າ ຂໍໃຫ້ສັງເກດການຂົ່ມຂູ່ຂອງເຂົາ ກັບຂໍໂຜດໃຫ້
ຜູ້ຮັບໃຊ້ຂອງທ່ານພວກຜູ້ຂ້ານີ້ ມີໃຈກ້າຫານທີ່ຈະເວົ້າປະກາດຖ້ອຍຄຳຂອງທ່ານ
4:30 ແລ້ວບັດນີ້ ຂໍໃຫ້ທ່ານຍື່ນມືຂອງທ່ານອອກມາປົວຄົນເຈັບໃຫ້ເຊົາ ໂດຍໂຜດ-
ໃຫ້ມີເຄື່ອງໝາຍອັນສຳຄັນ ກັບເຫດການມະຫັດສະຈັນເກີດຂຶ້ນໃນພຣະນາມ
ຂອງ ພຣະເຢຊູ ພຣະບຸດ ຜູ້ບໍລິສຸດຂອງທ່ານ ອາເມນ"
4:31 ບັດພວກເຂົາອະທິຖານເວົ້ານຳພຣະເຈົ້າຈົບແລ້ວ ໝ້ອງທີ່ເຂົາປະຊຸມກັນຢູ່-
ຫັ້ນເກີດສະເທືອນສະທ້ານຫວັ່ນໄຫວ ແລ້ວພວກເຂົາຊຶ່ງປະກອບດ້ວຍ ພຣະວິນ-
ຍານ ຈັ່ງໄດ້ອອກໄປປະກາດ ພຣະຄຳ ຂອງພຣະເຈົ້າໂດຍໃຈກ້າຫານ
4:32 ແລ້ວຄົນຫລວງຫລາຍທີ່ຮັບເຊື່ອນັ້ນໄດ້ເປັນນ້ຳໜຶ່ງໃຈດຽວກັນ ກັບບໍ່ມີໃຜ
ອ້າງວ່າສິ່ງຂອງທີ່ເຂົາມີຢູ່ເປັນຂອງໂຕເອງ ແຕ່ຄູ່ຢ່າງຂອງເຂົາມີນັ້ນໄດ້ເປັນຂອງ
ກາງ
4:33 ແລ້ວໂດຍລິດກຳລັງອັນຍິ່ງໃຫຍ່ຊຶ່ງມາຈາກພຣະເຈົ້າພວກທູດພິເສດຈັ່ງເປັນ
ພະຍານເຖິງການເປັນຂຶ້ນມາຈາກຕາຍຂອງພຣະເຢຊູຄຣິດເຈົ້າ ແລ້ວພຣະກະລຸ-
ນາທິຄຸນອັນຍິ່ງໃຫຍ່ຂອງພຣະເຈົ້າໄດ້ປະທັບຢູ່ກັບເຂົາໝົດຄູ່ຄົນ
4:34 ແລ້ວບໍ່ມີໃຜໃນພວກເຂົາທີ່ທຸກຍາກລຳບາກອີຫຍັງເລີຍ ຍ້ອນວ່າຜູ້ໃດທີ່ມີໄຮ່-
ນາ ບ້ານເຮືອນ ກໍໄດ້ຂາຍ ແລ້ວໄດ້ນຳເອົາເງິນຄ່າຂອງແນວທີ່ໄດ້ຂາຍນັ້ນມາ
4:35 ຈັ່ງວາງລົງໄວ້ຢູ່ທາງໜ້າພວກທູດພິເສດ ແລ້ວພວກທູດພິເສດໄດ້ແຈກຈ່າຍ
ໃຫ້ຄູ່ຄົນຕາມທີ່ແຕ່ລະຄົນຕ້ອງການ
4:36 ແລ້ວ ໂຢເສ ຜູ້ທີ່ທູດພິເສດເອີ້ນກັນວ່າ " ບາຣະນາບາ " (ຊຶ່ງແປວ່າຜູ້ໜຸນນ້ຳ
ໃຈ) ເປັນຄົນ ເລວີ ໄທ ເກາະ ກຸບໂຣ
4:37 ບັດນີ້ ເຂົາມີທີ່ດິນແປງໜຶ່ງ ຈັ່ງໄດ້ຂາຍແລ້ວເອົາເງິນຄ່າທີ່ດິນນັ້ນມາວາງລົງ
ໄວ້ຢູ່ທາງໜ້າພວກທູດພິເສດ

## ກິດຈະການ ບົດທີ 5

5:1 ແຕ່ມີຜູ້ຊາຍອີກຄົນໜຶ່ງຊື່ ອານາເນຍ ກັບເມຍເຂົາຊື່ວ່າ ຊາຟີຣາ ໄດ້ຂາຍທີ່
ດິນແປງໜຶ່ງຄືກັນ

5:2 ແລ້ວຜູ້ຊາຍຜູ້ນັ້ນໄດ້ເກັບສ່ວນໜຶ່ງຂອງລາຄາທີ່ດິນນັ້ນໄວ້ ຊຶ່ງເມຍເຂົາກໍຮ່ວມ
ຮູ້ນຳກັນ ສ່ວນໜຶ່ງຂອງເງິນນັ້ນເຂົາເອົາມາວາງລົງໄວ້ຢູ່ທາງໜ້າພວກທູດພິເສດ
ຄືກັນ
5:3 ສ່ວນ ເປໂຕ ຈຶ່ງຖາມເຂົາວ່າ “ ອານາເນຍ ເອີຍ ເປັນຫຍັງຊາຕານຈຶ່ງໃຫ້ໃຈ
ເຈົ້າເຕັມໄປດ້ວຍການຂີ້ຕົວະ ເພື່ອໃຫ້ຕົວະ ພຣະວິນຍານ ຊຶ່ງເຈົ້າໄດ້ເກັບເອົາ
ສ່ວນໜຶ່ງຂອງລາຄາທີ່ດິນນັ້ນໄວ້ເພື່ອໂຕເອງ
5:4 ກ່ອນຊິຂາຍທີ່ດິນແປງນັ້ນ ມັນກໍຍັງເປັນຂອງເຈົ້າແມ່ນບໍ່ເນາະ ບັດຂາຍແລ້ວ
ເງິນນັ້ນກໍຍັງຢູ່ໃນອຳນາດຂອງເຈົ້າທີ່ຊິເຮັດອີຫຍັງກໍໄດ້ບໍ່ແມ່ນບໍ້ ແລ້ວເປັນຫຍັງ
ເຈົ້າຄຶດໃນໃຈແບບນີ້ ຄືເຈົ້າບໍ່ໄດ້ວາງແຜນການທີ່ຊິຕົວະຄົນຊື່ໆ ແຕ່ໄດ້ຕົວະ
ຮອດພຣະເຈົ້າ”
5:5 ແລ້ວບັດ ອານາເນຍ ໄດ້ຍິນຄຳເວົ້ານັ້ນ ກໍລົ້ມລົງໃຈຂາດຕາຍກັບໜ້ອງ ແລ້ວຄູ່
ຄົນທີ່ໄດ້ຍິນເລື່ອງນີ້ກໍພາກັນຕົກໃຈຢ້ານຢ່າງໃຫຍ່
5:6 ບັດນີ້ ພວກຄົນໜຸ່ມກໍລຸກຂຶ້ນຫໍ່ສົບຂອງເຂົາໄວ້ ແລ້ວຫາມເອົາໄປຝັງ
5:7 ຫລັງຈາກນັ້ນປະມານສາມຊົ່ວໂມງ ເມຍຂອງເຂົາຈັ່ງເຂົ້າໄປ ໂດຍຍັງບໍ່ຮູ້ເຖິງ
ເຫດການທີ່ເກີດຂຶ້ນກັບຜົວ
5:8 ສ່ວນ ເປໂຕ ເລີຍຖາມນາງວ່າ “ບອກເຮົາເບິ່ງ ເຈົ້າຂາຍທີ່ດິນໄດ້ລາຄາເທົ່ານັ້ນ
ບໍ້” ນາງຈັ່ງຕອບວ່າ “ຄ່ະ ໄດ້ເທົ່ານັ້ນຄ່ະ”
5:9 ເປໂຕ ຈັ່ງຖາມນາງວ່າ “ເປັນຫຍັງພວກເຈົ້າໄດ້ພ້ອມໃຈກັນທົດລອງ ພຣະວິນ-
ຍານ ຂອງພຣະຜູ້ເປັນເຈົ້າ ນີ້ແຫລະ ຕີນຂອງຄົນຜູ້ທີ່ຝັງສົບຜົວຂອງເຈົ້າກໍຢູ່ປະຕູ
ແລ້ວໆ ເຂົາຊິຫາມສົບຂອງເຈົ້າອອກໄປນຳ”
5:10 ແລ້ວໃນຫວ່າງນັ້ນພໍດີ ນາງກໍລົ້ມລົງຕາຍຢູ່ທາງຕີນຂອງ ເປໂຕ ພໍດີພວກ
ຄົນໜຸ່ມໄດ້ເຂົ້າມາເຫັນວ່າຍິງນັ້ນຕາຍແລ້ວ ຈັ່ງໄດ້ຫາມສົບອອກໄປຝັງໄວ້ຂ້າງ
ຜົວຂອງນາງ
5:11 ແລ້ວຄູ່ຄົນໃນກຸ່ມຜູ້ເຊື່ອນັ້ນໄດ້ເກີດຢ້ານຢ່າງໃຫຍ່ ພ້ອມທັງໝົດຄູ່ຄົນທີ່ໄດ້-
ຍິນເຖິງເຫດການນີ້

5:12 ແລ້ວມີເຄື່ອງໝາຍອັນສຳຄັນ ກັບເຫດການມະຫັດສະຈັນຫລາຍອັນຫລາຍ
ແນວ ໄດ້ເກີດຂຶ້ນໃນໝູ່ປະຊາຊົນ ໂດຍຜ່ານມືຂອງພວກທູດພິເສດ... (ແລ້ວ
ພວກເຂົາໝົດທູ່ຄົນໄດ້ເປັນນໍ້າໜຶ່ງໃຈດຽວກັນ ຮ່ວມກັນຢູ່ຫລັງຄາລະບຽງຂອງ
ໂຊໂລໂມນ
5:13 ສ່ວນຄົນອື່ນໆ ຢູ່ພາຍນອກ ບໍ່ກ້າທີ່ຊິເຂົ້າມາຮ່ວມນຳພວກເຂົາ ແຕ່ວ່າຝ່າຍ
ປະຊາຊົນໄດ້ເຄົາລົບຍົກຍ້ອງພວກເຂົາຢ່າງສູງ
5:14 ແລ້ວໄດ້ມີຈຳນວນຄົນເພີ່ມທະວີຂຶ້ນໃນພຣະຜູ້ເປັນເຈົ້າ ເປັນຄົນຫລວງຫລາຍ
ທັງຜູ້ຊາຍທັງຍິງ)
5:15 ຈົນກວ່າພວກເຂົາໄດ້ພາກັນຫາມຄົນເຈັບປ່ວຍອອກມາຂ້າງທາງ ວາງລົງເທິງ
ສາດກັບເທິງເປຫາມຄົນເຈັບ ເພື່ອວ່າແມ່ນແຕ່ບັດ ເປໂຕ ຍ່າງຜ່ານໄປ ຢ່າງນ້ອຍ
ເງົາຂອງ ລາວ ອາດ ຊິຖືກຜູ້ລາງຄົນ
5:16 ແລ້ວມີຄົນຫລວງຫລາຍໄດ້ອອກມາຈາກເມືອງຕ່າງໆ ທີ່ຢູ່ອ້ອມແອ້ມເມືອງ
ເຢຣູຊາເລັມ ພາຄົນເຈັບອອກມາ ພ້ອມກັບຄົນທີ່ມີຜີໂສໂຄກເຂົ້າກໍ່ກວນ ແລ້ວ
ເຂົາທັງຫລາຍໄດ້ເຊົາເປັນດີໝົດທູ່ຄົນ
5:17 ສ່ວນມະຫາປະໂລຫິດ ພ້ອມທັງພັກພວກຂອງເຂົາ (ຄືພວກຄະນະ ຊາດູ-
ກາຍ ) ຈັ່ງມີໃຈຮ້ອນຮົນເຕັມໄປດ້ວຍຄວາມແຄ້ນເຄືອງ
5:18 ພວກເຂົາເລີຍພາກັນຈັບພວກທູດພິເສດ ຈອງຈຳຂັງໄວ້ໃນຄຸກຫລວງ
5:19 ແຕ່ໃນຕອນກາງຄືນນັ້ນ ມີເທວະທູດອົງໜຶ່ງຂອງພຣະຜູ້ເປັນເຈົ້າໄດ້ມາໄຂ
ປະຕູຄຸກອອກ ແລ້ວໄດ້ພາທູດພິເສດອອກໄປ ພ້ອມບອກເຂົາວ່າ
5:20 “ໃຫ້ເຂົ້າໄປຢືນຢູ່ໃນພຣະວິຫານເດີ້ ແລ້ວໃຫ້ປະກາດຖ້ອຍຄຳທັງໝົດເຖິງ
ເລື່ອງຊີວິດໃໝ່ນີ້ ໃຫ້ພວກຄົນຢູ່ຫັ້ນຟັງເດີ້”
5:21 ແລ້ວບັດພໍທູດພິເສດໄດ້ຍິນແນວນັ້ນ ເຂົ້າເລີຍເຂົ້າໄປສອນຢູ່ໃນພຣະວິຫານ
ແຕ່ເຊົ້າ ແລ້ວມະຫາປະໂລຫິດໄດ້ເຂົ້າມາຮ່ວມກັບພັກພວກຂອງເຂົາ ໄດ້ເອີ້ນປະ
ຊຸມສະພາ ພ້ອມກັບຄະນະຜູ້ເຖົ້າຜູ້ແກ່ຂອງສະພາຂອງຊົນຊາດ ອິສະຣາເອນ
ທັງໝົດ ແລ້ວຈັ່ງໃຊ້ເຈົ້າໜ້າໄປເອົາທູດພິເສດອອກມາຈາກຄຸກນັ້ນ

5:22 ແຕ່ບັດພໍພວກເຈົ້າໜ້າທີ່ປະຈຳພຣະວິຫານໄປຮອດຄຸກແລ້ວ ເຂົາບໍ່ໄດ້ຮັບ
ທູດພິເສດຢູ່ໃນຫັ້ນເລີຍ ຈັ່ງຫລົບໄປຣາຍງານໂຕ
5:23 ວ່າ "ພວກຂ້ອຍ ພໍໄປຮອດຄຸກກໍເຫັນວ່າປິດໄວ້ຢ່າງໝັ້ນຄົງດີ ກັບພວກຍາມກໍ
ຢືນເຝົ້າຢູ່ໜ້າປະຕູນັ້ນ ແຕ່ພໍເປີດປະຕູແລ້ວກໍບໍ່ເຫັນໃຜຢູ່ຂ້າງໃນ"
5:24 ແລ້ວບັດຫົວໜ້າປະໂລຫິດ ກັບຫົວໜ້າຮັກສາການໃນພຣະວິຫານ ພ້ອມທັງ
ຄະນະຫົວໜ້າປະໂລຫິດ ໄດ້ຍິນຄຳນີ້ ກໍເກີດການສົງໄສເລື່ອງຂອງທູດພິເສດນັ້ນ
ວ່າ ອາດ ຊິມີອິຫຍັງເກີດຂຶ້ນຕໍ່ໄປອີກ
5:25 ແລ້ວກໍມີຄົນໜຶ່ງມາບອກເຂົາວ່າ "ນີ້ແຫລະ ຜູ້ຊາຍໝູ່ນັ້ນ ຜູ້ທີ່ພວກເຈົ້າໄດ້ສັ່ງ
ໃຫ້ຂັງໄວ້ໃນຄຸກ ພວມຢືນຢູ່ໃນພຣະວິຫານ ສອນປະຊາຊົນຢູ່ຫັ້ນ"
5:26 ແລ້ວຫົວໜ້າຮັກສາການໃນພຣະວິຫານ ພ້ອມກັບພວກເຈົ້າໜ້າທີ່ປະຈຳ
ພຣະວິຫານໄດ້ໄປຄ່ອຍເວົ້າຄ່ອຍຈາພາພວກທູດພິເສດອອກມາໂດຍບໍ່ໄດ້ໃຊ້
ຄວາມຮຸນແຮງ ຍ້ອນເຂົາຢ້ານວ່າ ອາດ ຊິຖືກ ປະຊາຊົນເກີດບໍ່ພໍໃຈເອົາຫີນ
ແກວ່ງໃສ່ເຂົາ
5:27 ແລ້ວພໍພວກເຂົາພາທູດພິເສດອອກມາແລ້ວກໍໃຫ້ຢືນຢູ່ຕໍ່ໜ້າກຸ່ມສະພາ ມະ-
ຫາປະໂລຫິດເລີຍສອບຖາມທູດພິເສດ
5:28 ວ່າ "ເຮົາໄດ້ຫ້າມພວກເຈົ້າໄວ້ພໍແຮງແລ້ວບໍ່ແມ່ນບໍ້ ວ່າບໍ່ໃຫ້ສອນອອກຊື່ຜູ້-
ນັ້ນອີກເລີຍ ແລ້ວນີ້ແຫລະ ຄຳສອນຂອງພວກເຈົ້າໄດ້ແຜ່ຫລາຍເຕັມໄປຮອດທົ່ວ
ເມືອງ ເຢຣູຊາເລັມ ແລ້ວ ພ້ອມທັງຢາກໃຫ້ເລືອດຂອງຜູ້ນັ້ນຕົກຢູ່ກັບພວກເຮົາ"
5:29 ສ່ວນ ເປໂຕ ກັບທູດພິເສດຜູ້ອື່ນໆ ຕອບພ້ອມກັນວ່າ "ພວກເຮົາຄວນເຊື່ອຟັງ
ພຣະເຈົ້າແທນທີ່ຊິເຊື່ອຟັງຄົນ
5:30 ຄືພຣະເຈົ້າຂອງພວກບັນພະບຸລຸດຂອງເຮົາໄດ້ບັນດານໃຫ້ ພຣະເຢຊູ ເປັນ
ຂຶ້ນມາຈາກຕາຍແລ້ວ ແມ່ນຜູ້ທີ່ພວກເຈົ້າໄດ້ສັງຫານໂດຍຄຶງເທິງຫລັກໄມ້ນັ້ນ
5:31 ຄືພຣະເຈົ້າໄດ້ແຕ່ງຕັ້ງເຈີມພຣະອົງນີ້ໄວ້ໃຫ້ຢູ່ເບື້ອງຂວາຂອງເພິ່ນ ໃຫ້ເປັນ
ຈອມ ລາຊາ ກັບເປັນອົງພຣະຜູ້ໂຜດໃຫ້ລອດພົ້ນ ເພື່ອຊິໃຫ້ຊົນຊາດ ອິສະຣາ-
ເອນ ກັບໃຈໃໝ່ ເຂົ້າມາຮັບການໃຫ້ອະໄພໂທດຄວາມຜິດບາບຂອງເຂົາ

5:32 ແລ້ວພວກເຮົາໄດ້ເປັນຫຼັກຖານພະຍານຂອງເພິ່ນເຖິງເຫດການແນວໝູ່ນີ້
ພ້ອມທັງອົງ ພຣະວິນຍານ ທີ່ພຣະເຈົ້າໄດ້ມອບໃຫ້ຄູ່ຄົນທີ່ເຊື່ອຟັງພຣະອົງນັ້ນກໍ
ເປັນພະຍານນໍາ”
5:33 ບັດພວກເຂົາໄດ້ຍິນແນວນັ້ນແລ້ວ ກໍຊູນໃຈແຮງ ຈັ່ງຮ່ວມຫາທາງຊິຂ້າພວກ
ທູດພິເສດຖິ້ມ
5:34 ແຕ່ມີຄົນໜຶ່ງຊື່ ຄາມາລີເອັນ ເປັນພວກຄະນະ ຟາຣີຊາຍ ກັບເປັນນັກທໍາ
ທາງກົດບັນຍັດນໍາ ຈັ່ງເປັນທີ່ນັບຖືຂອງປະຊາຊົນ ໄດ້ຢືນຂຶ້ນໃນສະພາແລ້ວສັ່ງ
ໃຫ້ເອົາພວກທູດພິເສດອອກໄປທາງນອກກ່ອນ
5:35 ແລ້ວ ລາວ ຈັ່ງເວົ້າໃຫ້ທີ່ປະຊຸມຟັງວ່າ “ທ່ານຜູ້ຊາຍ ອິສະຣາເອນ ເອີຍ ລະວັງ
ໃຫ້ດີເດີ້ ທີ່ພວກທ່ານຄຶດຊິເຮັດໃສ່ພວກຜູ້ຊາຍໝູ່ນີ້
5:36 ຄືແຕ່ກ່ອນເຄີຍມີຄົນໜຶ່ງຊື່ ທູດາ ອວດຕັ້ງໂຕວ່າເປັນຜູ້ສໍາຄັນ ຈັ່ງມີຜູ້ຊາຍ
ຕິດຕາມເຂົາໄປປະມານສີ່ຮ້ອຍຄົນ ແຕ່ວ່າ ທູດາ ນັ້ນຖືກຂ້າຖິ້ມ ຄົນທັງຫລາຍທີ່
ໄດ້ເຊື່ອຟັງເຂົາກໍກະຈັກກະຈາຍອອກໄປ
5:37 ແລ້ວຢູ່ມາຫລັງຈາກຜູ້ນີ້ກໍມີອີກຄົນໜຶ່ງຊື່ ຢູດາ ເປັນ ໄທ ກາລີເລ ໄດ້ໂດ່ງດັ່ງ
ຂຶ້ນໃນຕອນຈົດບັນຊີສໍາມະໂນຄົວ ຈັ່ງມີຫລາຍຄົນຕິດຕາມໂຕເຂົາໄປ ແຕ່ຜູ້ນັ້ນກໍ
ພິນາດຄືກັນ ແລ້ວພວກຄົນທັງຫລາຍທີ່ໄດ້ເຊື່ອຟັງເຂົາກໍກະຈັກກະຈາຍອອກໄປ
5:38 ສະຫລຸບແລ້ວຂ້ອຍວ່າ ໃຫ້ປ່ອຍຄົນພວກນີ້ໄວ້ກ່ອນໃຫ້ໄປຕາມເລື່ອງຂອງ
ເຂົາເອງເດີ້ ຢ່າເຮັດຫຍັງໃສ່ເຂົາເລີຍ ຍ້ອນວ່າຄັ່ນຖ້ອຍຄໍາຫລືການງານນີ້ມາ
ຈາກຄົນຊື່ໆ ມັນກໍຊິໝົດໄປເອງ
5:39 ແຕ່ວ່າ ຄັ່ນມັນມາຈາກພຣະເຈົ້າ ພວກເຈົ້າຊິປາບບໍ່ໄດ້ເລີຍ ຢ້ານວ່າ ດີບໍ່ດີ
ພວກເຈົ້າຊິກັບຕັ້ງໂຕເປັນສັດຕູຕໍ່ພຣະເຈົ້າເລີຍຊໍ້າ”
5:40 ຟັງແລ້ວພວກເຂົາຈັ່ງເຫັນນໍາ ລາວ ຈັ່ງໄດ້ເອີ້ນພວກທູດພິເສດເຂົ້າມາອີກ ພໍ
ຄ້ຽນຕີແລ້ວ ໄດ້ສັ່ງໄວ້ບໍ່ໃຫ້ເວົ້າອອກຊື່ຂອງ ພຣະເຢຊູ ອີກ ແລ້ວຈັ່ງປ່ອຍເຂົາໄປ
5:41 ພວກທູດພິເສດຈັ່ງອອກຈາກສະພານັ້ນໄປ ມີຄວາມປິຕິຍິນດີ ຮູ້ສຶກໂຕເອງວ່າ
ເປັນກຽດຢ່າງສູງທີ່ມີໂອກາດຮັບການລົບຫລູ່ດູໝິ່ນເພື່ອພຣະນາມຂອງເພິ່ນ

5:42 ແລ້ວພວກເຂົາໄດ້ສອນກັບໄດ້ປະກາດຂ່າວປະເສີດຂອງ ພຣະເຢຊູຄຣິດ ຄູ່ມື້
ໆ ບໍ່ໄດ້ຂາດ ທັງຢູ່ໃນພຣະວິຫານກັບຕາມບ້ານຕາມເຮືອນນຳ

## ກິດຈະການ ບົດທີ 6

6:1 ແລ້ວໃນຕອນນັ້ນ ບັດຈຳນວນລູກສິດພວມທະວີຫລາຍຂຶ້ນ ພວກເກຣັກກໍເລີ່ມ
ຈົ່ມວ່າ ໃນການແຈກຂອງຊ່ອຍຄົນທຸກຍາກລຳບາກແຕ່ລະມື້ນັ້ນ ພວກເຮັບເຣີ
ເວັ້ນໄວ້ ບໍ່ແຈກແນວກິນໃຫ້ພວກແມ່ໝ້າຍຊາວເກຣັກ
6:2 ຝ່າຍທູດພິເສດສິບສອງຄົນນັ້ນ ຈັ່ງເອີ້ນພວກລູກສິດໃຫ້ມາຫາເຂົາແລ້ວເວົ້າ
ວ່າ "ມັນຊິບໍ່ສົມຄວນທີ່ພວກເຮົາຊິຕ້ອງປ່ອຍ ພຣະຄຳ ຂອງພຣະເຈົ້າໄວ້ ເພື່ອໄປ
ຍ່າງ ໂຕະແຈກແນວຢູ່ແນວກິນ
6:3 ຈັ່ງຊັ້ນ ພີ່ນ້ອງທັງຫລາຍ ເອີຍ ໃຫ້ເລືອກເອົາເຈັດຄົນໃນພວກເຈົ້າໄວ້ເດີ້ ຄົນໝູ່
ນີ້ຊິຕ້ອງມີຊື່ສຽງດີ ແລ້ວປະກອບດ້ວຍ ພຣະວິນຍານ ກັບມີສະຕິປັນຍາ ຄືເຮົາຊິ
ແຕ່ງຕັ້ງພວກເຂົາໄວ້ເພື່ອການງານແນວນີ້ໂດຍສະເພາະ
6:4 ຝ່າຍພວກເຮົາຊິອຸທິດໂຕເອງໄວ້ ເພື່ອການອະທິຖານ ກັບການສອນ ພຣະຄຳ
ຢູ່ສະເໝີ"
6:5 ຄົນທັງຫລາຍເຫັນດີເຫັນຊອບກັບຂໍ້ສະເໜີນີ້ ຈັ່ງໄດ້ເລືອກ ຊະເຕຟາໂນ (ຜູ້
ປະກອບດ້ວຍຄວາມເຊື່ອກັບດ້ວຍ ພຣະວິນຍານ ) ກັບໄດ້ເລືອກ ຟີລິບ ໂປໂຄ-
ໂລ ນີກາໂນ ຕີໂມນ ປາເມນາ ກັບ ນີໂກລາໂອ (ໄທເມືອງ ອັນຕີໂອເຂຍ ທີ່ເຂົ້າ
ຄວາມເຊື່ອນຳຄົນ ຢິວ )
6:6 ແລ້ວໄດ້ພາຄົນພວກນີ້ທີ່ເລືອກນັ້ນ ໃຫ້ມາຢູ່ຕໍ່ໜ້າພວກທູດພິເສດ ແລ້ວບັດ
ພວກທູດພິເສດອະທິຖານແລ້ວ ຈັ່ງໄດ້ວາງມືເຈີມພວກເຂົາ
6:7 ແລ້ວ ພຣະຄຳ ຂອງພຣະເຈົ້າໄດ້ແຜ່ໄຫລອອກໄປ ກັບຈຳນວນພວກລູກສິດໄດ້
ທະວີຂຶ້ນຫລາຍໃນເມືອງ ເຢຣູຊາເລັມ ທັງມີພວກປະໂລຫິດກໍໄດ້ເຊື່ອຟັງຂ່າວ
ປະເສີດນຳ
6:8 ສ່ວນ ຊະເຕຟາໂນ ຊຶ່ງປະກອບດ້ວຍຄວາມເຊື່ອກັບລິດກຳລັງ ຈັ່ງເຮັດເຫດ-
ການມະຫັດສະຈັນກັບເຄື່ອງໝາຍສຳຄັນອັນໃຫຍ່ຫລວງ ຫວ່າງກາງປະຊາຊົນ

6:9 ແຕ່ມີຜູ້ລາງຄົນມາຈາກສາລາທຳທີ່ເອີ້ນວ່າ ສາລາທຳຂອງພວກຄົນເສລີ (ຄື
ພວກຊາວ ກີເຣເນ ພວກຊາວ ອາເລັກຊັນໂດ ພ້ອມທັງຜູ້ລາງຄົນຈາກ ກີລີເກຍ
ກັບ ເອເຊຍ ) ໄດ້ພາກັນມາໂຕ້ຖຽງກັບ ຊະເຕຟາໂນ
6:10 ແຕ່ພວກຄົນໝູ່ນັ້ນບໍ່ສາມາດສູ້ສະຕິປັນຍາຈາກ ພຣະວິນຍານ ຂອງ ຊະເຕ-
ຟາໂນ ໃນແນວທີ່ເພິ່ນໄດ້ເວົ້າ
6:11 ເຂົາຈັ່ງແອບໄປປັ່ນປ່ວນຄົນເປັນພະຍານເທັດມາຕູ່ວ່າ "ເຮົາໄດ້ຍິນຄົນຜູ້ນີ້
ເວົ້າລົບຫລູ່ໝິ່ນປະມາດ ໂມເຊ ກັບພຣະເຈົ້າ"
6:12 ເຂົາຍຸຍົງປຸກລະດົມໝົດຄູ່ຄົນ ທັງພວກຜູ້ຫລັກຜູ້ໃຫຍ່ ພ້ອມກັບພວກນັກທຳ
ແລ້ວພວກເຂົາຈັ່ງເຂົ້າມາຈັບເອົາ ຊະເຕຟາໂນ ພາໄປຕໍ່ໜ້າປະຊຸມສະພາ
6:13 ແລ້ວພວກເຂົາໄດ້ຕັ້ງເອົາພວກພະຍານບໍ່ຈິງມາເວົ້າໃສ່ວ່າ "ຄົນນີ້ເວົ້າຄຳ
ໝິ່ນປະມາດຕໍ່ສະຖານບໍລິສຸດນີ້ ກັບເວົ້າໝິ່ນປະມາດຕໍ່ກົດບັນຍັດຢ່າງບໍ່ຢູ່ບໍ່ເຊົາ
ເລີຍ
6:14 ຄືພວກເຮົາໄດ້ຍິນເຂົາເວົ້າວ່າ ພຣະເຢຊູ ຊາວ ນາຊາເຣັດ ນັ້ນຊິມ້າງວິຫານນີ້
ກັບຊິປ່ຽນທຳນຽມອັນດີງາມ ທີ່ປູ່ທວດ ໂມເຊ ໄດ້ມອບໄວ້ໃຫ້ໝູ່ເຮົາ"
6:15 ແລ້ວພວກສະມາຊິກໃນທີ່ປະຊຸມສະພາຕ່າງຄົນຕ່າງຈ້ອງເບິ່ງ ຊະເຕຟາໂນ
ເຫັນວ່າໃບໜ້າຂອງ ລາວ ສະຫງ່າງາມຄືໜ້າເທວະທູດ

## ກິດຈະການ ບົດທີ 7

7:1 ບັດນີ້ ມະຫາປະໂລຫິດຈັ່ງຖາມວ່າ "ເລື່ອງນີ້ແມ່ນອີຫລີບໍ້"
7:2 ແລ້ວສ່ວນ ຊະເຕຟາໂນ ຈັ່ງຕອບວ່າ "ພວກພີ່ນ້ອງທ່ານຜູ້ມີກຽດ ກັບທ່ານຜູ້
ອາວຸໂສ ຂໍຟັງຜູ້ຂ້າເວົ້າກ່ອນເຖີ ພຣະເຈົ້າຜູ້ປະກອບດ້ວຍສະຫງ່າລາສີອັນຮຸ່ງ-
ເຮືອງໄດ້ປາກົດເພິ່ນເອງແກ່ປູ່ທວດ ອັບຣາຮາມ ພໍ່ຕະກູນຂອງພວກເຮົາ ຕອນທີ່
ລາວ ຍັງຢູ່ໃນປະເທດ ເມໂຊໂປຕາເມຍ ກ່ອນຊິໄປອາໄສຢູ່ໃນເມືອງ ຮາຣານ
7:3 ກັບໄດ້ເວົ້າກັບ ລາວ ວ່າ 'ໃຫ້ເຈົ້າອອກໄປຈາກປະເທດຂອງເຈົ້າ ກັບຈາກ
ຍາດພີ່ນ້ອງຂອງເຈົ້າ ໄປຍັງດິນແດນທີ່ເຮົາຊິຊີ້ແຈງໃຫ້ເຈົ້າຮູ້ຈັກ'

7:4 ລາວ ເລີຍອອກຈາກດິນແດນຂອງຊາວ ຄານເດອາ ໄປອາໄສຢູ່ເມືອງ ຮາ-
ຣານ ແລ້ວບັດພໍພໍ່ຂອງ ລາວ ຕາຍ ພຣະເຈົ້າໄດ້ຍົກຍ້າຍ ລາວ ອອກຈາກນັ້ນ ມາ
ຢູ່ດິນແດນນີ້ທີ່ພວກທ່ານອາໄສຢູ່ໃນປະຈຸບັນ
7:5 ແຕ່ຕອນນັ້ນ ພຣະເຈົ້າບໍ່ທັນໂຜດໃຫ້ ລາວ ມີກຳມະສິດໃນດິນແດນເປັນມໍລະ-
ດົກ ແມ່ນແຕ່ດິນໜ້ອຍທີ່ຕີນຂອງ ລາວ ໄດ້ຢຽບກໍບໍ່ໃຫ້ເລີຍ ແລ້ວເຖິງຕອນທີ່
ລາວ ຍັງບໍ່ທັນມີລູກ ພຣະເຈົ້າໄດ້ສັນຍາໄວ້ກັບ ລາວ ວ່າຊິໃຫ້ດິນແດນນີ້ເປັນກຳ-
ມະສິດ ກັບໃຫ້ເປັນກຳມະສິດຂອງເຊື້ອສາຍຂອງ ລາວ ຕໍ່ໆ ກັນມາ
7:6 ແລ້ວພຣະເຈົ້າໄດ້ເວົ້າຈັ່ງຊີ້ວ່າ ຍ້ອນວ່າເຊື້ອສາຍຂອງ ລາວ ຊິໄປອາໄສຢູ່ໃນ
ດິນແດນອື່ນ ແລ້ວຄົນຢູ່ຫັ້ນຊິນຳເຂົາໄປສູ່ການເປັນຄົນໃຊ້ ຂົ່ມເຫງເຂົາເປັນເວ-
ລາຮອດສີ່ຮ້ອຍປີ
7:7 'ແລ້ວລາຊະອານາຈັກທີ່ພວກເຂົາຊິຕົກເປັນຄົນໃຊ້ນັ້ນ' ພຣະເຈົ້າເວົ້າວ່າ 'ເຮົາ
ກໍຊິພິພາກສາລົງໂທດ ແລ້ວຕໍ່ມາ ຫລັງຈາກເຂົາຊິ ອົບພະຍົບ ອອກມາ ເຂົາຊິ
ຮັບໃຊ້ເຮົາຢູ່ດິນແດນໜ້ອງນີ້'
7:8 ແລ້ວພຣະເຈົ້າໄດ້ຕັ້ງຄຳໝັ້ນສັນຍາເຖິງເລື່ອງການເຂົ້າພິທີຕັດໄວ້ກັບ ອັບຣາ-
ຮາມ ແລ້ວບັດພໍ ລາວ ໄດ້ລູກຊາຍຊື່ວ່າ ອີຊາກ ຈັ່ງໄດ້ເຮັດການເຂົ້າພິທີຕັດໃຫ້
ເຂົາຕອນອາຍຸໄດ້ແປດມື້ ແລ້ວ ອີຊາກ ໄດ້ລູກຊາຍຊື່ວ່າ ຢາໂຄບ ແລ້ວ ຢາໂຄບ
ໄດ້ລູກຊາຍສິບສອງຄົນ ຊຶ່ງເປັນພໍ່ຕະກູນຂອງພວກເຮົາ
7:9 ແລ້ວຝ່າຍພວກພໍ່ຕະກູນນັ້ນ ເຂົາຄຶດອິດສາ ໂຢເຊບ ຈັ່ງຂາຍ ລາວ ເຂົ້າໄປ
ທາງປະເທດ ເອຢິບ ແຕ່ພຣະເຈົ້າໄດ້ສະຖິດຢູ່ກັບ ລາວ
7:10 ຈັ່ງໄດ້ໂຜດຊ່ອຍ ໂຢເຊບ ໃຫ້ຫລີກເວັ້ນຄວາມເດືອດຮ້ອນອັນຍາກລຳບາກ
ທັງໝົດ ກັບໄດ້ໃຫ້ເຂົາເປັນທີ່ຮັກແພງກັບມີສະຕິປັນຍາໃນສາຍຕາຂອງ ຟາຣາ-
ໂອ ຜູ້ເປັນກະສັດຂອງປະເທດ ເອຢິບ ນັ້ນ ຟາຣາໂອ ຈັ່ງແຕ່ງຕັ້ງ ໂຢເຊບ ໃຫ້-
ເປັນຫົວໜ້າປົກຄອງປະເທດ ເອຢິບ ຮ່ວມກັນທັງພະລາດຊະວັງທັງໝົດຂອງ
ເພິ່ນ

7:11 ຢູ່ມາໄດ້ເກີດມີການແຫ້ງແລ້ງອຶດຢາກໝາກຫິວຢ່າງແຮງຮອດທົ່ວດິນແດນ
ເອຢິບ ພ້ອມທັງດິນແດນ ການາອານ ນໍາ ມີຄວາມລໍາບາກເດືອດຮ້ອນຫລາຍ
ບັດນີ້ພວກພໍ່ຕະກູນຂອງພວກເຮົາຫາແນວຊິກິນກໍບໍ່ມີເລີຍ
7:12 ແຕ່ບັດພໍ ຢາໂຄບ ໄດ້ຍິນວ່າມີເຂົ້າຢູ່ໃນປະເທດ ເອຢິບ ຈັ່ງໃຊ້ລູກໆ ຂອງ
ລາວ ຄືພວກພໍ່ຕະກູນຂອງພວກເຮົາ ອອກເດີນທາງໄປຍັງປະເທດ ເອຢິບ ເປັນ
ເທື່ອທໍາອິດ
7:13 ແລ້ວເທື່ອທີ່ສອງ ໂຢເຊບ ກໍເປີດເຜີຍໂຕໃຫ້ພີ່ນ້ອງຮູ້ຈັກວ່າແມ່ນໃຜ ກັບໄດ້
ແນະນໍາໃຫ້ ຟາຣາໂອ ຮູ້ຈັກພວກອ້າຍເຈົ້າຂອງນໍາ
7:14 ສ່ວນ ໂຢເຊບ ຈັ່ງໄດ້ຝາກຄວາມເຊີນ ຢາໂຄບ ຜູ້ເປັນພໍ່ ກັບຍາດພີ່ນ້ອງທາງ
ພວກອ້າຍໃຫ້ມາຫາ ລາວ ທັງໝົດກໍມີເຈັດສິບຫ້າຄົນ
7:15 ຢາໂຄບ ເລີຍລົງໄປປະເທດ ເອຢິບ ແລ້ວ ລາວ ໄດ້ຕາຍຢູ່ຫັ້ນ ພ້ອມພວກພໍ່
ຕະກູນຂອງພວກເຮົາຕາມອາຍຸໄຂ
7:16 ແລ້ວມີຄົນໄດ້ນໍາເອົາສົບເຂົາຫາມອອກໄປມ້ຽນໄວ້ໃນເມືອງ ຊີເຄັມ ໃນອຸບ-
ໂມງທີ່ພໍ່ ອັບຣາຮາມ ໄດ້ຊື້ໄວ້ເປັນເງິນຈໍານວນໜຶ່ງ ຈາກພວກລູກຊາຍຂອງ ຮາ-
ໂມ ຜູ້ເປັນພໍ່ຂອງ ຊີເຄັມ
7:17 ແລ້ວຢູ່ມາບັດໃກ້ຊິຮອດຍາມເວລາທີ່ພຣະເຈົ້າເວົ້າໄວ້ກັບ ອັບຣາຮາມ ໃນຄໍາ-
ໝັ້ນສັນຍານັ້ນ ຈໍານວນຄົນ ອິສະຣາເອນ ໄດ້ທະວີຫລາຍຂຶ້ນໃນປະເທດ ເອຢິບ
7:18 ຈັ່ງຮອດສະໄໝຂອງກະສັດອີກອົງໜຶ່ງ ເປັນກະສັດອົງໃໝ່ທີ່ບໍ່ຮູ້ຈັກກັນກັບ
ໂຢເຊບ
7:19 ແລ້ວກະສັດອົງນັ້ນໄດ້ເອົາປຽບພວກພໍ່ຕະກູນຂອງພວກເຮົາໂດຍໃຊ້ອຸບາຍ
ເລ້ຫລ່ຽມ ບັງຄັບໃຫ້ພໍ່ແມ່ໂຜດຖິ້ມລູກນ້ອຍໃຫ້ຕາຍ
7:20 ໂມເຊ ໄດ້ເກີດມາໃນຫວ່າງນັ້ນ ເປັນເດັກນ້ອຍທີ່ງົດງາມເປັນຕາຮັກຫລາຍ
(ໃນສາຍຕາພຣະເຈົ້າ) ໄດ້ຮັບການລ້ຽງໃນບ້ານພໍ່ແມ່ຮອດສາມເດືອນ
7:21 ແລ້ວບັດພໍເດັກນ້ອຍ ໂມເຊ ຕ້ອງຖືກໂຜດຖິ້ມອອກໄປ ລູກສາວຂອງ ຟາຣາ-
ໂອ ຈັ່ງຮັບມາລ້ຽງໄວ້ຄືເປັນລູກຊາຍຂອງນາງເອງ

7:22 ແລ້ວ ໂມເຊ ຈັ່ງໄດ້ຮຽນຮູ້ໃນວິຊາການຄູ່ຢ່າງຂອງຊາວ ເອຢິບ ເກັ່ງຫລາຍໃນ
ທາງຄວາມເວົ້າກັບໃນ ກິດຈະການ ຕ່າງໆ
7:23 ບັດ ໂມເຊ ອາຍຸໄດ້ຮອດສີ່ສິບປີເຕັມແລ້ວ ໃຈ ລາວ ຄຶດຢາກໄປຢ້ຽມຍາມ
ຍາດພີ່ນ້ອງຂອງ ລາວ ຄືຊົນຊາດ ອິສະຣາເອນ ນັ້ນ
7:24 ບັດພໍ ລາວ ເຫັນຄົນ ອິສະຣາເອນ ຜູ້ໜຶ່ງຖືກຂົ່ມເຫງຕີໂດຍມືຂອງຄົນ ເອຢິບ
ຄົນໜຶ່ງ ລາວ ເລີຍເຂົ້າໄປຊ່ອຍຕີຊາວ ເອຢິບ ຄົນນັ້ນເຖິງຕາຍ
7:25 ລາວ ຄຶດວ່າຍາດພີ່ນ້ອງຄືຊິເຂົ້າໃຈວ່າ ພຣະເຈົ້າຊິຊ່ອຍພວກເຂົາໃຫ້ລອດ-
ພົ້ນຈາກການເປັນຂ້າທາດໄດ້ໂດຍມືຂອງ ລາວ ແຕ່ກັບເປັນວ່າເຂົາກໍບໍ່ເຂົ້າໃຈ
ແນວນັ້ນເລີຍ
7:26 ບັດຮອດເຊົ້າມື້ໃໝ່ ໂມເຊ ໄດ້ເຂົ້າໄປຫາພວກເຂົາອີກ ເຫັນຄົນ ອິສະຣາເອນ
ສອງຄົນພວມຜິດກັນຢູ່ ກໍເລີຍຢາກຊ່ອຍເຂົາໃຫ້ຄືນດີກັນອີກ ຈັ່ງເວົ້າວ່າ 'ໝູ່ພວກ
ເອີຍ ເຈົ້າຜູ້ເປັນພີ່ນ້ອງກັນ ເປັນຫຍັງຄືຜິດກັນແນວນີ້'
7:27 ຝ່າຍຄົນຜູ້ທີ່ຫາເລື່ອງຜິດໃສ່ກັນນັ້ນ ຈັ່ງຊຸກ ໂມເຊ ອອກໄປເວົ້າວ່າ 'ແມ່ນໃຜ
ແຕ່ງຕັ້ງເຈົ້າໃຫ້ເປັນຜູ້ປົກຄອງກັບຜູ້ພິພາກສາເໜືອພວກເຮົາ
7:28 ເຈົ້າຊິຂ້າເຮົາຄືຈັ່ງໄດ້ຂ້າຊາວ ເອຢິບ ຄົນນັ້ນມື້ວານນີ້ບໍ້'
7:29 ບັດພໍ ໂມເຊ ໄດ້ຍິນຄຳເວົ້ານັ້ນ ຈັ່ງຕະເຫລີດໜີອອກໄປລີ້ໂຕເປັນຄົນຕ່າງ
ແດນຕ່າງຖິ່ນຢູ່ດິນແດນ ມີດີອານ ເປັນໜ້ອງທີ່ ລາວ ເອົາເມຍໄດ້ລູກຊາຍສອງ
ຄົນ
7:30 ສີ່ສິບປີຜ່ານມາແລ້ວ ເທວະທູດຂອງພຣະຜູ້ເປັນເຈົ້າ ໄດ້ມາປາກົດຕໍ່ໜ້າ ໂມ-
ເຊ ໃນແປວໄຟຢູ່ພຸ່ມໄມ້ພຸ່ມໜຶ່ງ ໃນຖິ່ນແຫ້ງແລ້ງໜ້ອງພູເຂົາ ຊີນາຍ
7:31 ບັດ ໂມເຊ ເຫັນກໍແປກໃຈເປັນຕາງຶດກັບແນວປະຫລາດນັ້ນ ບັດເຂົ້າໄປເບິ່ງ
ໃກ້ໆ ກໍມີສຽງ(ຢ່າງຜູ້ມີອຳນາດ)ຂອງພຣະຜູ້ເປັນເຈົ້າເວົ້າກັບ ລາວ
7:32 ບອກວ່າ 'ເຮົານີ້ເປັນພຣະເຈົ້າຂອງພວກພໍ່ຕະກູນຂອງເຈົ້າ ເປັນພຣະເຈົ້າ
ຂອງ ອັບຣາຮາມ ເປັນພຣະເຈົ້າຂອງ ອີຊາກ ກັບເປັນພຣະເຈົ້າຂອງ ຢາໂຄບ
ນຳ' ໂມເຊ ຈັ່ງເກີດຢ້ານຫລາຍຈົນໂຕສັ່ນ ເລີຍບໍ່ກ້າແນມເບິ່ງ

7:33 ສ່ວນພຣະຜູ້ເປັນເຈົ້າຈັ່ງເວົ້າກັບ ໂມເຊ ວ່າ ‘ໃຫ້ເຈົ້າປົດເກີບຂອງເຈົ້າເດີ້ ຍ້ອນ
ວ່າໜ້ອງທີ່ເຈົ້າຢືນຢູ່ນີ້ເປັນໜ້ອງສັກສິດບໍລິສຸດ
7:34 ເຮົາໄດ້ເຫັນຄວາມທຸກຍາກລຳບາກຂອງຊົນຊາດຂອງເຮົາ ທີ່ຢູ່ໃນປະເທດ
ເອຢິບ ແລ້ວ ຄືເຮົາໄດ້ຍິນສຽງຮ້ອງໄຫ້ຂອງເຂົາ ເຮົາຈັ່ງລົງມາເພື່ອຊິກະລຸນາເຂົາ
ໃຫ້ລອດພົ້ນ ມາແມ່ະ ບັດນີ້ເຮົາຊິໃຊ້ເຈົ້າໄປປະເທດ ເອຢິບ ເດີ້’”
7:35 ຊະເຕຟາໂນ ເວົ້າຕໍ່ອີກວ່າ “ ໂມເຊ ຜູ້ນີ້ທີ່ຖືກເຂົາປະຕິເສດວ່າ ‘ໃຜແຕ່ງຕັ້ງ
ເຈົ້າໃຫ້ເປັນຜູ້ປົກຄອງກັບຜູ້ພິພາກສາພວກເຮົານີ້’ ແມ່ນຜູ້ນີ້ເນາະ ທີ່ພຣະເຈົ້າໄດ້
ໃຊ້ມາ ເປັນທັງຜູ້ປົກຄອງກັບຜູ້ຊ່ອຍໃຫ້ລອດພົ້ນໂດຍມືຂອງເທວະທູດອົງນັ້ນທີ່
ໄດ້ປາກົດຕໍ່ໜ້າ ລາວ ໃນພຸ່ມໄມ້ນັ້ນ
7:36 ແມ່ນ ໂມເຊ ຄົນນີ້ເນາະ ທີ່ໄດ້ນຳພວກເຂົາ ອົບພະຍົບ ອອກມາໃຫ້ລອດພົ້ນ
ຈາກການເປັນຂ້າທາດໃນດິນແດນ ເອຢິບ ໂດຍໄດ້ເຮັດເຫດການມະຫັດສະຈັນ
ໃຫຍ່ ກັບເຄື່ອງໝາຍອັນສຳຄັນຕ່າງໆ ໃນດິນແດນນັ້ນ ກັບໃນ ທະເລແດງ ກັບ
ໃນຖິ່ນແຫ້ງແລ້ງນຳ ເປັນເວລາສີ່ສິບປີ
7:37 ຄືແມ່ນ ໂມເຊ ຄົນນີ້ເນາະ ທີ່ເຄີຍບອກຊົນຊາດ ອິສະຣາເອນ ວ່າ ‘ພຣະຜູ້-
ເປັນເຈົ້າ ຜູ້ເປັນພຣະເຈົ້າຂອງເຈົ້າ ຊິແຕ່ງຕັ້ງຜູ້ເປັນປາກເປັນສຽງຜູ້ໜຶ່ງອອກຈາກ
ພີ່ນ້ອງຂອງເຈົ້າຄືກັນກັບເຮົານີ້ ແລ້ວພວກເຈົ້າຊິຟັງຜູ້ນັ້ນ’
7:38 ໂມເຊ ຜູ້ນີ້ເນາະ ໄດ້ຢູ່ໃນກຸ່ມຄົນຂອງພຣະເຈົ້າໃນຖິ່ນແຫ້ງແລ້ງນຳກັນກັບ
ເທວະທູດຂອງພຣະຜູ້ເປັນເຈົ້ານັ້ນ ທີ່ໄດ້ເວົ້າກັບ ລາວ ຢູ່ພູເຂົາ ຊີນາຍ ກັບ ລາວ
ໄດ້ຢູ່ກັບພວກພໍ່ຕະກູນຂອງພວກເຮົາ ແມ່ນ ລາວ ເອງທີ່ໄດ້ຮັບມອບ ພຣະຄຳ ອັນ
ປະກອບດ້ວຍຊີວິດນັ້ນ ກໍເພື່ອໃຫ້ໄວ້ກັບພວກເຮົາທັງຫລາຍ
7:39 ຊຶ່ງພວກພໍ່ຕະກູນຂອງພວກເຮົາບໍ່ຍອມເຊື່ອຟັງ ແຕ່ໄດ້ປະຕິເສດຂັບໄລ່ອອກ
ໄປ ແລ້ວເຂົາຈັ່ງມີໃຈຄຶດຢາກຫລົບໄປຢູ່ດິນແດນ ເອຢິບ ອີກ
7:40 ຈັ່ງໄດ້ສັ່ງ ອາໂຣນ ວ່າ ‘ໃຫ້ເຈົ້າເຮັດພະຂຶ້ນມາໃຫ້ພວກເຮົາເດີ້ ເພື່ອຊິນຳໜ້າ
ພວກເຮົາໄປ ສ່ວນ ໂມເຊ ຜູ້ທີ່ໄດ້ພາເຮົາອອກຈາກປະເທດ ເອຢິບ ນັ້ນ ພວກເຮົາ
ບໍ່ຈັກວ່າ ລາວ ເປັນອີຫຍັງໄປແລ້ວ’

7:41 ແລ້ວໃນຕອນນັ້ນ ພວກເຂົາໄດ້ເຮັດຮູບງົວນ້ອຍຂຶ້ນມາ ແລ້ວກໍເອົາເຄື່ອງ
ຖວາຍມາບູຊາຮູບງົວນ້ອຍນັ້ນ ແລ້ວກໍພາກັນລ້ຽງສະຫລອງດີອົກດີໃຈນຳແນວທີ່
ເຂົາໄດ້ເຮັດຂຶ້ນມາໂດຍມືຂອງເຂົາເອງ
7:42 ແລ້ວພຣະເຈົ້າຈັ່ງຫັນຫລັງໃສ່ ປ່ອຍໃຫ້ພວກເຂົາໄປນົບໄປໄຫວ້ດູ່ແນວຢູ່ເທິງ
ທ້ອງຟ້າຕາມໃຈມັກ ຊຶ່ງເປັນໄປຕາມທີ່ມີຂຽນໄວ້ໃນໜັງສືຂອງຜູ້ເປັນປາກເປັນ-
ສຽງວ່າ ‘ໂອ ໄທ ອິສະຣາເອນ ເອີຍ ພວກເຈົ້າເຄີຍໄດ້ເອົາສັດກັບແນວອື່ນໆ ມາ
ຖວາຍບູຊາເຮົາບໍ້ ຕອນຢູ່ໃນຖິ່ນແຫ້ງແລ້ງສີ່ສິບປີນັ້ນ
7:43 ເອີ້ ແທ້ຈິງແລ້ວພວກເຈົ້າໄດ້ນຳເອົາວິຫານຂອງ ພະໂມເລັກ ນັ້ນໄປນຳ ກັບໄດ້
ເອົາຮູບດາວຂອງ ພະເຣຟານ ໄປນຳ ແມ່ນພວກຮູບເຄົາລົບທີ່ພວກເຈົ້າໄດ້ເຮັດ
ຂຶ້ນມາເພື່ອຂາບໄຫວ້ ຈັ່ງຊັ້ນເຮົາຊິປ່ອຍໃຫ້ພວກເຈົ້າຕົກເປັນຊະເລີຍເລີຍເມືອງ
ບາບີໂລນ ອອກໄປອີກ’
7:44 ພໍ່ຕະກູນຂອງພວກເຮົາ ບັດຢູ່ໃນຖິ່ນແຫ້ງແລ້ງນັ້ນ ໄດ້ມີວິຫານເຄື່ອນທີ່ຊຶ່ງ
ເປັນຕາມແບບຢ່າງທີ່ພຣະເຈົ້າໄດ້ບອກ ໂມເຊ ເຮັດ ເປັນຫຼັກຖານພະຍານວ່າ
ພຣະເຈົ້າສະຖິດຢູ່ນຳ
7:45 ຊຶ່ງພວກພໍ່ຕະກູນຂອງເຮົາທີ່ຖ່າຍທອດກັນມາ ໄດ້ຂົນໄປນຳບັດຕາມ ໂຢ-
ຊວຍ ໄປ ຕອນໄດ້ເຂົ້າຖືເອົາເອົາດິນແດນຂອງຄົນຕ່າງຊົນຊາດ ທີ່ພຣະເຈົ້າໄດ້
ຂັບໄລ່ອອກໄປຕໍ່ໜ້າພວກພໍ່ຕະກູນຂອງພວກເຮົາ ແລ້ວຈັ່ງມີສືບໆ ມາຮອດສະໄ
ໝກະສັດ ດາວິດ
7:46 ຊຶ່ງກະສັດ ດາວິດ ນັ້ນ ເປັນທີ່ຊອບຕໍ່ໜ້າພຣະເຈົ້າ ກັບ ລາວ ປາດຖະໜາທີ່ຊິ
ສ້າງພຣະວິຫານເປັນທີ່ພັກອາໄສສຳລັບພຣະເຈົ້າຂອງ ຢາໂຄບ
7:47 ແຕ່ວ່າກະສັດ ໂຊໂລໂມນ ໄດ້ສ້າງພຣະວິຫານສຳລັບພຣະເຈົ້າ
7:48 ຈັ່ງໃດກໍຕາມ ພຣະຜູ້ສູງສຸດບໍ່ໄດ້ປະທັບຢູ່ໃນພຣະວິຫານທີ່ເຮັດໄວ້ໂດຍມືຄົນ
ຕາມທີ່ຜູ້ເປັນປາກເປັນສຽງຂອງພຣະເຈົ້າໄດ້ກ່າວໄວ້ວ່າ
7:49 ‘ສະຫວັນເປັນບັນລັງຂອງເຮົາ ກັບແຜ່ນດິນໂລກເປັນທີ່ພັກຕີນຂອງເຮົາ ຈັ່ງ-
ຊັ້ນ ເຈົ້າຊິສ້າງວິຫານແບບໃດໃຫ້ເຮົາຢູ່ ຫລືວ່າຊິສ້າງອິຫຍັງພໍເປັນທີ່ພັກແຮມ
ຂອງເຮົາໄດ້

7:50 ຄືມືຂອງເຮົາໄດ້ເຮັດແນວໝູ່ນີ້ໝົດຄູ່ຢ່າງແລ້ວ ບໍ່ແມ່ນບໍ້'
7:51 ໂອ ເຈົ້າຄົນຊາດຄໍແຂງ ໃຈດື້ ຫູຕຶງເອີຍ ພວກເຈົ້າຕໍ່ຕ້ານ ພຣະວິນຍານ ຂອງ
ພຣະເຈົ້າຢູ່ສະເໝີ ພວກພໍ່ຕະກູນຂອງເຈົ້າເຄີຍເຮັດຈັ່ງໃດ ພວກເຈົ້າກໍໄດ້ເຮັດ
ຈັ່ງຊັ້ນຄືກັນ
7:52 ມີໃຜໃນພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າທີ່ພວກພໍ່ຕະກູນຂອງພວກ
ເຈົ້າບໍ່ໄດ້ຂົ່ມເຫງ ທັງໄດ້ຂ້າຖິ້ມຜູ້ທີ່ທຳນາຍເຖິງການລົງມາຂອງອົງພຣະຜູ້ໂຜດຜູ້
ຍຸດຕິທຳນັ້ນ ແມ່ນອົງຜູ້ນັ້ນເນາະທີ່ພວກເຈົ້າໄດ້ທໍລະຍົດຂ້າຖິ້ມແລ້ວ
7:53 ຊຶ່ງພວກເຈົ້າໄດ້ຮັບກົດບັນຍັດຂອງພຣະເຈົ້າຈາກໝູ່ເທວະທູດ ແຕ່ບໍ່ໄດ້ຮັກ-
ສາເລີຍ"
7:54 ບັດພວກເຂົາໄດ້ຍິນແນວຈັ່ງຊັ້ນ ກໍຮູ້ສຶກບາດໃຈຫລາຍ ຈັ່ງກັດແຂ້ວກັດຄາງ
ໃສ່ ຊະເຕຟາໂນ
7:55 ແຕ່ສ່ວນ ຊະເຕຟາໂນ ນັ້ນ ຊຶ່ງປະກອບດ້ວຍ ພຣະວິນຍານ ໄດ້ຫລຽວຂຶ້ນ
ຈ້ອງເບິ່ງເທິງຟ້າສະຫວັນ ເຫັນສະຫງ່າລາສີອັນຮຸ່ງເຮືອງຂອງພຣະເຈົ້າ ກັບເຫັນ
ພຣະເຢຊູ ພວມຢືນຢູ່ເບື້ອງຂວາຂອງພຣະເຈົ້າ
7:56 ແລ້ວ ລາວ ເວົ້າວ່າ "ນີ້ແຫລະ ຂ້ອຍເຫັນທ້ອງຟ້າແຫວກອອກ ກັບເຫັນບຸດ
ມະນຸດຢືນຢູ່ເບື້ອງຂວາຂອງພຣະເຈົ້າ"
7:57 ບັດນີ້ ພວກເຂົາກໍຮ້ອງຂຶ້ນສຽງດັ່ງ ພ້ອມອຸດຫູໄວ້ ພາກັນແລ່ນເຂົ້າໄປຈັບເອົາ
ຊະເຕຟາໂນ
7:58 ແລ້ວຈັ່ງຂັບໄລ່ ລາວ ອອກນອກເມືອງ ເອົາຫີນແກວ່ງໃສ່ໃຫ້ຕາຍ ແລ້ວຝ່າຍ
ພວກຄົນທີ່ເຮັດໃສ່ ຊະເຕຟາໂນ ນັ້ນ ໄດ້ຖອດເສື້ອນອກວາງລົງທາງໜ້າຜູ້ຊາຍ
ໜຸ່ມຄົນໜຶ່ງຊື່ວ່າ ໂຊໂລ
7:59 ແລ້ວເຂົາຈັ່ງເອົາຫີນແກວ່ງໃສ່ ຊະເຕຟາໂນ ຕອນ ລາວ ພວມອ້ອນວອນຕໍ່
ພຣະເຈົ້າວ່າ "ຂ້າແດ່ ພຣະເຢຊູເຈົ້າ ເອີຍ ຂໍກະລຸນາຮັບເອົາຈິດວິນຍານຂອງຜູ້ຂ້າ
ແໜ່ເດີ້"
7:60 ແລ້ວ ຊະເຕຟາໂນ ຈັ່ງຄຸກເຂົ່າລົງຮ້ອງສຽງດັ່ງວ່າ "ພຣະອົງເຈົ້າ ຂໍກະລຸນາຢ່າ
ໂທດເຂົາຍ້ອນບາບນີ້" ພໍເວົ້າຈັ່ງຊີ້ແລ້ວລາວກໍລ່ວງຫລັບໄປ

# ກິດຈະການ ບົດທີ 8

8:1 ແລ້ວ ໂຊໂລ ນີ້ກໍເຫັນດີເຫັນຊອບທີ່ພວກເຂົາໄດ້ຂ້າ ຊະເຕຟາໂນ ໃນຫວ່າງ-
ນັ້ນໄດ້ເກີດການຂົ່ມເຫງກຸ່ມຜູ້ເຊື່ອຢ່າງໃຫຍ່ໃນເມືອງ ເຢຣູຊາເລັມ ພວກລູກສິດ
ທັງໝົດນັ້ນຈັ່ງກະຈາຍອອກໄປ ທົ່ວແຖວ ຢູດາຍ ກັບແຖວ ຊາມາເຣຍ ເຫລືອແຕ່
ພວກທູດພິເສດທີ່ຍັງຢູ່ຫັ້ນ
8:2 ແລ້ວພວກຄົນທີ່ນັບຖືເຄົາລົບພຣະເຈົ້າໄດ້ເອົາສົບຂອງ ຊະເຕຟາໂນ ອອກໄປ
ຝັງ ແລ້ວຈັ່ງຮ້ອງໄຫ້ຮ້ອງໄຫ້ເສຍໃຈຫລາຍນຳ ລາວ
8:3 ສ່ວນ ໂຊໂລ ນັ້ນໄດ້ທຳລາຍກຸ່ມຜູ້ເຊື່ອຢ່າງສາຫັດ ຈັ່ງໄດ້ບຸກເຂົ້າໄປໃນຄູ່ບ້ານ
ຄູ່ເຮືອນລາກທັງຜູ້ຊາຍກັບຍິງອອກມາເອົາໄປຄຸມຂັງໄວ້ໃນຄຸກ
8:4 ແລ້ວໃນຂະນະນັ້ນ ຝ່າຍພວກລູກສິດທີ່ຖືກກະຈັກກະຈາຍ ຈັ່ງໄດ້ອອກໄປປະ-
ກາດ ພຣະຄຳ ຂອງພຣະເຈົ້າຢູ່ຄູ່ໝ້ອງ
8:5 ສ່ວນ ຟີລິບ ກໍລົງໄປເມືອງ ຊາມາເຣຍ ແລ້ວໄດ້ປະກາດເລື່ອງ ພຣະຄຣິດ ໃຫ້
ພວກເຂົາ
8:6 ແລ້ວຄົນຫລວງຫລາຍຢູ່ຫັ້ນ ພ້ອມກັນຟັງຖ້ອຍຄຳທີ່ ຟີລິບ ໄດ້ປະກາດຢູ່ຫັ້ນ
ພ້ອມໄດ້ຍິນໄດ້ເຫັນເຫດການມະຫັດສະຈັນທີ່ ລາວ ໄດ້ເຮັດ
8:7 ຄືມີວິນຍານໂສໂຄກຫລາຍໂຕທີ່ສິງຢູ່ໃນຄົນຫລາຍຄົນ ໄດ້ພາກັນຮ້ອງສຽງດັ່ງ
ແລ້ວອອກມາຈາກຄົນໝູ່ນັ້ນທີ່ເຄີຍຖືກສິງ ກັບຄົນທີ່ເປັນໂລກໄພໄຂ້ເຈັບ ເປັນ
ອຳມະພາດ ກັບເປັນງ່ອຍກໍເຊົາດີກັບໝ້ອງ
8:8 ຈັ່ງເກີດຄວາມຊົມຊື່ນຍິນດີງໍຢ່າງໃຫຍ່ໃນເມືອງນັ້ນ
8:9 ແຕ່ວ່າມີຜູ້ຊາຍຄົນໜຶ່ງໃນເມືອງນັ້ນ ຊື່ ຊີໂມນ ຄົນຜູ້ນີ້ເຄີຍເຮັດເວດມົນມາ
ກ່ອນ ຈັ່ງໄດ້ພາຊາວ ຊາມາເຣຍ ຫລົງໄຫລກົນຄາຖາຂອງເຂົາ ເຂົາຈັ່ງຍົກຕົວ-
ເອງວ່າເປັນຜູ້ສຳຄັນ
8:10 ໝົດຄູ່ຄົນຢູ່ນັ້ນທັງຜູ້ໃຫຍ່ຜູ້ນ້ອຍກໍເອົາໃຈໃສ່ໃນການຟັງຄົນນັ້ນ ຈັ່ງເວົ້າວ່າ
"ຜູ້ຊາຍຄົນນີ້ມີລິດອຳນາດມາຈາກພຣະເຈົ້າ"
8:11 ຄົນຢູ່ຫັ້ນຈັ່ງນັບຖືເຂົາຍ້ອນວ່າເຂົາສັງເກດໃຈໃນເວດມົນກົນອຸບາຍຂອງເຂົາ
ມາແຕ່ດົນນານ

8:12 ແຕ່ບັດ ຟີລິບ ໄດ້ປະກາດເລື່ອງລາຊະອານາຈັກຂອງພຣະເຈົ້າ ກັບພຣະນາມ
ຂອງ ພຣະເຢຊູຄຣິດ ຄົນຫລວງຫລາຍກໍໄດ້ເຊື່ອ ກັບຮັບການຈຸ່ມນໍ້າທັງຜູ້ຊາຍ
ກັບແມ່ຍິງ
8:13 ສ່ວນ ຊີໂມນ ກໍເຊື່ອນໍາ ບັດຮັບການຈຸ່ມນໍ້າແລ້ວກໍໄດ້ຕິດຕາມ ຟີລິບ ໄປ ທັງ
ສັງເກດໃຈເປັນຕາງຶດໃນເຫດການມະຫັດສະຈັນກັບ ເຄື່ອງໝາຍອັນສໍາຄັນ
ຕ່າງໆ ທີ່ເຫັນເກີດຂຶ້ນທາງ ຟີລິບ ນັ້ນ
8:14 ບັດພໍພວກທູດພິເສດທີ່ຢູ່ໃນເມືອງ ເຢຣູຊາເລັມ ໄດ້ຍິນວ່າຊາວ ຊາມາເຣຍ
ໄດ້ຮັບ ພຣະຄໍາ ຂອງພຣະເຈົ້າແລ້ວ ຈັ່ງໄດ້ສົ່ງ ເປໂຕ ກັບ ໂຢຮັນ ໄປຫາເຂົາ
8:15 ບັດພວກເຂົາລົງໄປຮອດແລ້ວ ກໍອະທິຖານວອນຂໍເພື່ອໃຫ້ຄົນຢູ່ຫັ້ນຮັບ
ພຣະວິນຍານ
8:16 ຄືຕອນນັ້ນ ພຣະວິນຍານ ຍັງບໍ່ທັນລົງມາປະທັບຢູ່ນໍາພວກເຂົາ ເປັນແຕ່ວ່າ
ເຂົາໄດ້ຮັບການຈຸ່ມນໍ້າໃນພຣະນາມຂອງພຣະເຢຊູຄຣິດເຈົ້າເທົ່ານັ້ນ
8:17 ແລ້ວບັດ ເປໂຕ ກັບ ໂຢຮັນ ວາງມືເທິງເຂົາແລ້ວ ພຣະວິນຍານ ກໍລົງມາປະ-
ທັບຢູ່ນໍາພວກເຂົາ
8:18 ບັດ ຊີໂມນ ເຫັນວ່າ ຄົນໝູ່ນັ້ນໄດ້ຮັບ ພຣະວິນຍານ ໂດຍການວາງມືຂອງ
ພວກທູດພິເສດ ຈັ່ງເອົາເງິນມາສະເໜີໃຫ້ພວກ ລາວ
8:19 ກັບເວົ້າວ່າ “ໃຫ້ແບ່ງລິດອໍານາດນີ້ໃຫ້ຂ້ອຍນໍາເດີ້ ເພື່ອວ່າບັດຂ້ອຍຊິວາງມື
ໃສ່ຜູ້ໃດ ຜູ້ນັ້ນກໍຊິໄດ້ຮັບ ພຣະວິນຍານ ຄືກັນ”
8:20 ແຕ່ສ່ວນ ເປໂຕ ຈັ່ງບອກ ຊີໂມນ ວ່າ “ຂໍໃຫ້ເງິນຂອງເຈົ້າພິນາດໄປພ້ອມກັບ
ເຈົ້າເດີ້ ຍ້ອນເຈົ້າຄຶດວ່າຊິສາມາດຊື້ເອົາຂອງຂວັນຂອງພຣະເຈົ້າໄດ້ໂດຍເງິນ-
ທອງ
8:21 ເຈົ້າບໍ່ມີສິດມີສ່ວນໃນ ກິດຈະການ ນີ້ດອກ ຍ້ອນວ່າຈິດໃຈຂອງເຈົ້າບໍ່ຊື່ກົງໃນ
ສາຍຕາຂອງພຣະເຈົ້າເລີຍ
8:22 ຈັ່ງຊັ້ນ ໃຫ້ກັບໃຈໃໝ່ຈາກການຊົ່ວຮ້າຍຂອງເຈົ້າເດີ້ ອະທິຖານວອນຂໍພຣະ-
ເຈົ້າ ຫາລາງເທື່ອເພິ່ນຊິໂປດຍົກໂທດຍ້ອນຄວາມນຶກຄຶດໃນໃຈຂອງເຈົ້ານັ້ນ

8:23 ຄືເຮົາຮູ້ເຫັນວ່າ ເຈົ້າຕົກຢູ່ໃນບ້ວງແຮ້ວເຕັມໄປດ້ວຍຄວາມຂົມຂື່ນ ຖືກມັດໄວ້
ດ້ວຍຄວາມຊົ່ວຊ້າເລວຊາມ”
8:24 ຝ່າຍ ຊີໂມນ ຈັ່ງຕອບວ່າ “ຂໍໃຫ້ເຈົ້າອະທິຖານວອນຂໍຕໍ່ພຣະຜູ້ເປັນເຈົ້າເພື່ອ
ຂ້ອຍແໜ່ທ້ອນ ເພື່ອເຫດການແນວໝູ່ນີ້ທີ່ເຈົ້າເວົ້ານີ້ ຊິບໍ່ໄດ້ຕົກໃສ່ໂຕຂ້ອຍ”
8:25 ບັດພວກທູດພິເສດໄດ້ເປັນພະຍານກັບປະກາດ ພຣະຄໍາ ຂອງພຣະຜູ້ເປັນ-
ເຈົ້າແລ້ວ ກໍໄດ້ຫລົບເມືອເມືອງ ເຢຣູຊາເລັມ ກັບໄດ້ປະກາດຂ່າວປະເສີດຕາມ
ໝູ່ບ້ານຕ່າງໆ ຂອງຊາວ ຊາມາເຣຍ
8:26 ແລ້ວມີເທວະທູດຂອງພຣະຜູ້ເປັນເຈົ້າ ໄດ້ສັ່ງ ຟີລິບ ວ່າ “ໃຫ້ລຸກຂຶ້ນອອກໄປ
ທາງທິດໃຕ້ຕາມເສັ້ນທາງຈາກເມືອງ ເຢຣູຊາເລັມ ທີ່ລົງໄປເມືອງ ກາຊາ ຊຶ່ງເປັນ
ທາງປ່ຽວ”
8:27 ຟີລິບ ກໍເລີຍລຸກຂຶ້ນໄປ ແລ້ວນີ້ແຫລະ ໄດ້ມີຜູ້ຊາຍ ເອທິໂອເປຍ ຄົນໜຶ່ງເປັນ
ບັນເດາະ ຊຶ່ງເປັນເຈົ້າໜ້າທີ່ອັນດັບສູງຂອງພະນາງ ກັນເດກາ ລາຊິນີຂອງຊາວ
ເອທິໂອເປຍ ກັບເປັນນາຍຄັງຊັບທັງໝົດຂອງລາຊິນີນັ້ນ ໄດ້ມານະມັດສະການ
ພຣະເຈົ້າໃນເມືອງ ເຢຣູຊາເລັມ
8:28 ຕອນກໍາລັງນັ່ງລົດມ້າເມືອບ້ານເມືອງ ບັນເດາະພວມອ່ານ ພຣະຄໍາ ໃນໜັງສື
ເອຊາຢາ ຜູ້ເປັນປາກເປັນສຽງຂອງພຣະເຈົ້າ
8:29 ບັດນີ້ ພຣະວິນຍານ ສັ່ງ ຟີລິບ ວ່າ “ໃຫ້ເຂົ້າໄປໃກ້ໆ ລົດມ້ານັ້ນເດີ້”
8:30 ແລ້ວ ຟີລິບ ຈັ່ງແລ່ນເຂົ້າໄປໃກ້ລົດມ້ານັ້ນ ລາວກໍໄດ້ຍິນບັນເດາະຄົນນັ້ນອ່ານ
ພຣະຄໍາ ໃນໜັງສື ເອຊາຢາ ຜູ້ເປັນປາກເປັນສຽງຂອງພຣະເຈົ້າຈັ່ງຖາມວ່າ
“ໝ້ອງທີ່ເຈົ້າອ່ານນັ້ນເຈົ້າເຂົ້າໃຈຢູ່ບໍ້”
8:31 ບັນເດາະຕອບວ່າ “ຊິເຂົ້າໃຈໄດ້ຈັ່ງໃດຄັ່ນບໍ່ມີໃຜອະທິບາຍໃຫ້ຟັງ” ລາວ
ເລີຍເຊີນ ຟີລິບ ຂຶ້ນນັ່ງນໍາ ລາວ
8:32 ພຣະຄໍາ ຕອນທີ່ບັນເດາະອ່ານຢູ່ຫັ້ນ ມີວ່າ “ຜູ້ນັ້ນໄດ້ຖືກນໍາອອກໄປຄືແກະ
ຖືກຈູງໄປຂ້າ ແລ້ວຄືກັນກັບແກະນ້ອຍທີ່ມິດຢູ່ຕໍ່ໜ້າຜູ້ທີ່ຊິຕັດຂົນມັນສໍ່າໃດ ຜູ້ນັ້ນ
ກໍບໍ່ໄດ້ປາກອິຫຍັງສໍ່ານັ້ນ

8:33 ໃນຍາມທີ່ທ່ານຜູ້ນັ້ນຖືກດູຖູກອັນເປັນຕາອາຍນັ້ນ ທ່ານກໍບໍ່ໄດ້ຮັບຄວາມຍຸດ-
ຕິທຳເລີຍ ແລ້ວໃຜແໜ່ຊິເວົ້າເຖິງລູກຫລານຂອງທ່ານໃຫ້ຟັງໄດ້ ຍ້ອນວ່າຊີວິດ
ຂອງທ່ານຖືກຕັດຂາດອອກຈາກແຜ່ນດິນໂລກໄປແລ້ວ”
8:34 ອ່ານແລ້ວບັນເດາະຈັ່ງຖາມ ຟີລິບ ວ່າ “ຊ່ອຍອະທິບາຍໃຫ້ຂ້ອຍແໜ່ ຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້າເວົ້າຈັ່ງຊີ້ເວົ້າເຖິງຜູ້ໃດນີ້ ເວົ້າເຖິງໂຕເຂົາເອງບໍ້ ຫລື
ເວົ້າເຖິງຜູ້ອື່ນໆ”
8:35 ບັດນີ້ ຟີລິບ ຈັ່ງອະທິບາຍເລື່ອງຕາມ ພຣະຄຳ ຂໍ້ໝູ່ນັ້ນ ແລ້ວຈັ່ງປະກາດ
ເລື່ອງ ພຣະເຢຊູ ໃຫ້ ລາວ
8:36 ແລ້ວບັດພວມເດີນທາງໄປກໍມາຮອດໜອງມີນ້ຳ ບັນເດາະຈັ່ງບອກວ່າ “ນີ້-
ແຫລະ ມີນ້ຳຢູ່ ມີອິຫຍັງຂັດຂ້ອງແໜ່ ທີ່ຂ້ອຍຊິບໍ່ຮັບການຈຸ່ມນ້ຳເລີຍ”
8:37 ແລ້ວ ຟີລິບ ຈັ່ງເວົ້າວ່າ “ຄັ່ນເຈົ້າໄດ້ຮັບເຊື່ອຢ່າງເຕັມໃຈເຈົ້າກໍຮັບໄດ້ ໂລດ
ແລ້ວ” ບັນເດາະຈັ່ງຕອບວ່າ “ຂ້ອຍເຊື່ອອີຫລີວ່າ ພຣະເຢຊູຄຣິດ ເປັນ ພຣະບຸດ
ຂອງພຣະເຈົ້ານັ້ນເອງ”
8:38 ບັດນີ້ ບັນເດາະຈັ່ງສັ່ງໃຫ້ລົດມ້າຈອດ ກັບຄົນທັງສອງໄດ້ລົງນ້ຳທັງ ຟີລິບ ກັບ
ບັນເດາະຜູ້ນັ້ນ ຟີລິບ ກໍເລີຍໃຫ້ການຈຸ່ມນ້ຳໃຫ້ກັບ ລາວ
8:39 ພໍບັດຂຶ້ນຈາກນ້ຳແລ້ວ ພຣະວິນຍານ ຂອງພຣະຜູ້ເປັນເຈົ້າໄດ້ຮັບເອົາ ຟີລິບ
ໄປ ບັນເດາະນັ້ນກໍເລີຍບໍ່ໄດ້ເຫັນເຂົາອີກ ຈັ່ງເດີນທາງຕໍ່ໄປໂດຍຄວາມຍິນດີສັນ-
ລະເສີນພຣະເຈົ້າ
8:40 ສ່ວນ ຟີລິບ ກໍໄດ້ຮັບຢູ່ເມືອງ ອັດຊະໂດດ ບັດເດີນທາງຜ່ານໄປ ເຂົາໄດ້ປະ-
ກາດຂ່າວປະເສີດໃນຄູ່ເມືອງຈົນມາຮອດເມືອງ ກາຍຊາເຣຍ

## ກິດຈະການ ບົດທີ 9

9:1 ບັດນີ້ ໂຊໂລ ນັ້ນກໍຍັງຂູ່ຄຳ ຣາມ ວ່າຊິຂ້າລູກສິດຂອງພຣະຜູ້ເປັນເຈົ້າ ຈັ່ງໄປ
ຫາມະຫາປະໂລຫິດ
9:2 ແລ້ວໄດ້ຂໍໜັງສືຈາກ ລາວ ເປັນເອກະສານທາງການນຳໄປຍັງສາລາທຳ
ຕ່າງໆ ໃນເມືອງ ດາມາເຊ ເພື່ອຄັ່ນວ່າໄດ້ຮັບຜູ້ໜຶ່ງຜູ້ໃດທີ່ຖື “ທາງນັ້ນ” ບໍ່ວ່າຜູ້-
ຊາຍຫລືຍິງ ຊິໄດ້ຈັບມັດໄວ້ນຳມາຂຶ້ນສານຢູ່ເມືອງ ເຢຣູຊາເລັມ

9:3 ບັດພໍ ໂຊໂລ ເດີນທາງໄປໃກ້ຊິຮອດເມືອງ ດາມາເຊ ແລ້ວ ໃນທ່າງນັ້ນພໍດີ ມີ
ແສງຈ້າສ່ອງລົງມາຈາກຟ້າອ້ອມໂຕເຂົາໄວ້
9:4 ຝ່າຍ ໂຊໂລ ນັ້ນຈັ່ງລົ້ມລົງດິນ ແລ້ວໄດ້ຍິນສຽງ(ຈາກຜູ້ມີອຳນາດ)ເວົ້າກັບ
ລາວ ວ່າ " ໂຊໂລ ໆ ເອີຍ ເປັນຫຍັງເຈົ້າຈັ່ງຂົ່ມເຫງເຮົາ"
9:5 ໂຊໂລ ຈັ່ງຖາມວ່າ "ນາຍເຈົ້າຂ້າເອີຍ ນາຍເປັນຜູ້ໃດ" ພຣະຜູ້ເປັນເຈົ້າຈັ່ງ
ຕອບວ່າ "ເຮົາຄື ເຢຊູ ຊາວ ນາຊາເຣັດ ຜູ້ທີ່ເຈົ້າຂົ່ມເຫງ ການທີ່ເຈົ້າເຕະໃສ່ແສ້
ແຫລມນັ້ນເຈົ້າກໍຍາກແທ້ເນາະ"
9:6 ໂຊໂລ ຈັ່ງຖາມດ້ວຍຄວາມຢ້ານກັບເປັນຕາງຶດ ວ່າ "ພຣະຜູ້ເປັນເຈົ້າ ເຈົ້າຂ້າ
ນາຍຕ້ອງການໃຫ້ຜູ້ຂ້າເຮັດຫຍັງແໜ່" ແລ້ວພຣະຜູ້ເປັນເຈົ້າຈັ່ງເວົ້າກັບຂ້ອຍວ່າ
"ໃຫ້ເຈົ້າລຸກຂຶ້ນເຂົ້າໄປໃນເມືອງເດີ້ ແລ້ວຊິມີຄົນຢູ່ຫັ້ນບອກເຈົ້າຄູ່ຢ່າງ ແນວທີ່
ເຈົ້າຕ້ອງເຮັດນັ້ນ"
9:7 ແລ້ວໝູ່ຄົນທີ່ເດີນທາງໄປນຳກັນກໍຢືນມິດຢູ່ເວົ້າບໍ່ອອກ ຄືພວກເຂົາໄດ້ຍິນສຽງ
ເວົ້ານັ້ນແຕ່ບໍ່ເຫັນໃຜ
9:8 ສ່ວນ ໂຊໂລ ໄດ້ລຸກຂຶ້ນມາ ບັດລືມຕາຂຶ້ນແລ້ວກໍເບິ່ງບໍ່ເຫັນໃຜເລີຍ ຄົນທີ່ໄປ
ນຳກໍເລີຍຈູງມື ລາວ ໄປເຖິງເມືອງ ດາມາເຊ
9:9 ແລ້ວຕາເຂົາກໍມືດບໍ່ເຫັນຮຸ່ງເປັນເວລາຮອດສາມມື້ ແລ້ວເຂົາບໍ່ໄດ້ກິນໄດ້ດື່ມ
ອີຫຍັງເລີຍ
9:10 ແລ້ວໃນເມືອງ ດາມາເຊ ນັ້ນ ມີລູກສິດຄົນໜຶ່ງຊື່ ອານາເນຍ ພຣະຜູ້ເປັນເຈົ້າ
ໄດ້ມາຫາ ລາວ ໃນຄວາມຝັນ ເວົ້າວ່າ " ອານາເນຍ ເອີຍ" ອານາເນຍ ເລີຍຕອບ
ວ່າ "ນີ້ແຫລະ ຜູ້ຂ້າຢູ່ພີ້ ພຣະຜູ້ເປັນເຈົ້າ ເຈົ້າຂ້າ"
9:11 ບັດນີ້ ພຣະຜູ້ເປັນເຈົ້າຈັ່ງບອກເຂົາວ່າ "ໃຫ້ລຸກຂຶ້ນຊະ ໄປຫົນທາງທີ່ເອີ້ນຊື່ວ່າ
ທາງກົງ ຖາມຫາຜູ້ຊາຍຄົນໜຶ່ງຊື່ ໂຊໂລ ເປັນຊາວເມືອງ ຕາໂຊ ພັກຢູ່ເຮືອນ
ຂອງ ຢູດາ ຄືນີ້ແຫລະ ເຂົາພວມໄຫວ້ວອນອະທິຖານຢູ່
9:12 ຄືເຂົາໄດ້ເຫັນຄົນໜຶ່ງໃນຄວາມຝັນ ຊື່ວ່າ ອານາເນຍ ພວມມາວາງມືເທິງເຂົາ
ເພື່ອເຂົາຊິເຫັນຮຸ່ງໄດ້ຄືເກົ່າ"

9:13 ບັດນີ້ ອານາເນຍ ຕອບວ່າ “ພຣະຜູ້ເປັນເຈົ້າ ເຈົ້າຂ້າ ຜູ້ຂ້າໄດ້ຍິນຫລາຍຄົນ
ເວົ້າເຖິງຄົນຜູ້ນັ້ນວ່າ ເຂົາໄດ້ເຮັດແນວຊົ່ວຮ້າຍຫລາຍແນວໃສ່ຄົນຂອງພຣະອົງ
ຢູ່ໃນເມືອງ ເຢຣູຊາເລັມ ມາແລ້ວ
9:14 ກັບ ລາວ ໄດ້ຮັບອຳນາດຈາກຄະນະຫົວໜ້າປະໂລຫິດ ໃຫ້ຈອງຈຳໝົດທູ່ຄົນ-
ທີ່ຮ້ອງອອກພຣະນາມຂອງພຣະອົງໃນເມືອງນີ້”
9:15 ຝ່າຍພຣະຜູ້ເປັນເຈົ້າໄດ້ເວົ້າກັບ ລາວ ວ່າ “ບໍ່ເປັນຫຍັງ ໃຫ້ໄປ ໂລດ ເດີ້ ຍ້ອນ
ວ່າຜູ້ນັ້ນເປັນເຄື່ອງມືຂອງເຮົາທີ່ເຮົາໄດ້ເລືອກໄວ້ ເຂົາຊິນຳເອົານາມຂອງເຮົາໄປ
ປະກາດຕໍ່ພວກຄົນຕ່າງຊາດ ຕໍ່ກະສັດຕ່າງໆ ກັບຕໍ່ຊົນຊາດ ອິສະຣາເອນ ນຳ
9:16 ແລ້ວເຮົາຊິເປີດເຜີຍໃຫ້ເຂົາຮູ້ວ່າ ເຂົາຊິຕ້ອງທົນທຸກລຳບາກຫລາຍສໍ່າໃດ
ເພື່ອນາມຂອງເຮົາ”
9:17 ແລ້ວ ອານາເນຍ ເລີຍອອກໄປ ເຂົ້າເຮືອນຫລັງນັ້ນ ແລ້ວວາງມືເທິງ ໂຊໂລ
ເວົ້າວ່າ “ພີ່ນ້ອງ ໂຊໂລ ເອີຍ ພຣະຜູ້ເປັນເຈົ້າ ຄື ພຣະເຢຊູ ທີ່ໄດ້ສຳແດງພຣະອົງ
ເອງຕໍ່ເຈົ້າຢູ່ກາງທາງທີ່ເຈົ້າມານັ້ນ ຈັ່ງໄດ້ໃຊ້ຂ້ອຍມາວາງມືເພື່ອໃຫ້ເຈົ້າເຫັນຮຸ່ງ
ອີກ ກັບໃຫ້ປະກອບດ້ວຍ ພຣະວິນຍານ ນຳ”
9:18 ແລ້ວໃນຫວ່າງນັ້ນພໍດີ ມີແນວຄືເກັດຕົກຈາກຕາຂອງ ໂຊໂລ ແລ້ວ ລາວ ຈັ່ງ
ເຫັນຮຸ່ງອີກຄືເກົ່າ ແລ້ວຈັ່ງລຸກຂຶ້ນອອກໄປຮັບການຈຸ່ມນ້ຳທັນທີ
9:19 ບັດກິນເຂົ້າແລ້ວ ໂຊໂລ ກໍມີແຮງຂຶ້ນ ແລ້ວໄດ້ພັກກັບພວກລູກສິດຢູ່ຫລາຍມື້
ໃນເມືອງ ດາມາເຊ ນັ້ນ
9:20 ແລ້ວ ລາວ ໄດ້ອອກໄປປະກາດເລື່ອງ ພຣະຄຣິດ ທັນທີຕາມສາລາທຳຕ່າງໆ
ວ່າເພິ່ນເປັນ ພຣະບຸດ ຂອງພຣະເຈົ້າອີຫລີ
9:21 ແລ້ວຄົນທັງຫລາຍທີ່ໄດ້ຍິນກໍເປັນຕາງຶດຈັ່ງຖາມກັນວ່າ “ຄົນນີ້ບໍ່ແມ່ນຜູ້ນັ້ນບໍ້
ຄືຜູ້ທີ່ເຄີຍທຳລາຍຄົນທີ່ຮ້ອງອອກພຣະນາມໃນເມືອງ ເຢຣູຊາເລັມ ແລ້ວຈັ່ງມາ
ເມືອງນີ້ນຳຕັ້ງໃຈຊິຈັບເອົາຄົນຕາມເປົ້າໝາຍດຽວກັນ ເພື່ອຜູກມັດສົ່ງໃຫ້ຄະນະ
ຫົວໜ້າປະໂລຫິດຊັ່ນບໍ້”

9:22 ແຕ່ສ່ວນ ໂຊໂລ ນີ້ ລາວ ໄດ້ເຂັ້ມແຂງມີແຮງຫລາຍຂຶ້ນຢ່າງຕໍ່ເນື່ອງ ສາມາດ
ຊະນະພວກຢິວໃນເມືອງ ດາມາເຊ ໃຫ້ເຂົາສັບສົນ ໂດຍການພິສູດໃຫ້ເຂົາຮູ້ເຫັນ
ວ່າ ພຣະເຢຊູ ໄດ້ເປັນ ພຣະຄຣິດ ພຣະຜູ້ໂຜດນັ້ນເອງ
9:23 ຢູ່ມາອີກຫລາຍມື້ ພວກຢິວໄດ້ປຶກສາກັນຫາທາງຊິຂ້າ ໂຊໂລ ຖິ້ມ
9:24 ແຕ່ວ່າ ໂຊໂລ ຮູ້ຈັກແຜນການປອງຮ້າຍຂອງພວກເຂົາ ຄືພວກເຂົາໄດ້ເຝົ້າ
ປະຕູເມືອງທັງກາງເວັນກາງຄືນ ເພື່ອຄອຍຖ້າຂ້າ ລາວ
9:25 ຈັ່ງຊັ້ນ ໝູ່ລູກສິດໄດ້ພາ ໂຊໂລ ອອກໄປຍາມກາງຄືນ ແລ້ວຢ່ອນ ລາວ ລົງ
ຈາກກຳແພງເມືອງໃນເຂັ່ງໃຫຍ່
9:26 ແລ້ວບັດພໍ ໂຊໂລ ໄປຮອດເມືອງ ເຢຣູຊາເລັມ ລາວ ພະຍາຍາມເຂົ້າຕຸ້ມ-
ໂຮມກັນກັບພວກລູກສິດຢູ່ນັ້ນ ແຕ່ພວກເຂົາຢ້ານ ບໍ່ເຊື່ອວ່າ ໂຊໂລ ນີ້ເປັນລູກສິດ
ອີຫລີ
9:27 ແຕ່ວ່າ ບາຣະນາບາ ໄດ້ນຳ ໂຊໂລ ໄປຫາພວກທູດພິເສດ ແລ້ວບອກເຂົາວ່າ
ໂຊໂລ ເຫັນພຣະຜູ້ເປັນເຈົ້າຢູ່ລະຫວ່າງທາງ ກັບເພິ່ນໄດ້ເວົ້າກັບ ລາວ ແລ້ວ ບາ-
ຣະນາບາ ຈັ່ງເວົ້າສູ່ຟັງການທີ່ ໂຊໂລ ໄດ້ອອກໄປປະກາດໃນພຣະນາມຂອງ
ພຣະເຢຊູ ໂດຍໃຈກ້າຫານຢູ່ເມືອງ ດາມາເຊ ນັ້ນ
9:28 ແລ້ວ ໂຊໂລ ຈັ່ງອອກໄປເຂົ້າມາກັບພວກທູດພິເສດໃນເມືອງ ເຢຣູຊາເລັມ
9:29 ແລ້ວ ລາວ ຈັ່ງປະກາດໃນພຣະນາມຂອງພຣະເຢຊູຄຣິດເຈົ້າໂດຍໃຈກ້າຫານ
ແລ້ວໄດ້ເວົ້າໄລ່ລຽງໂຕ້ຖຽງກັນກັບ ຊາວຢິວ-ເກຣັກ ຢູ່ນັ້ນ ແຕ່ພວກເຂົາຈັ່ງຫາ
ຊ່ອງທາງທີ່ຊິຂ້າ ລາວ
9:30 ບັດໝູ່ພີ່ນ້ອງຮູ້ຈັ່ງຊັ້ນ ພວກເຂົາຈັ່ງພາ ໂຊໂລ ໄປເມືອງ ກາຍຊາເຣຍ ແລ້ວ
ຈັ່ງສົ່ງ ລາວ ໄປເມືອງ ຕາໂຊ
9:31 ຈັ່ງຊັ້ນ ກຸ່ມຜູ້ເຊື່ອຕະຫລອດທົ່ວແຄວ້ນ ຢູດາຍ ກາລີເລ ກັບ ຊາມາເຣຍ ຈັ່ງ
ມີຄວາມສະຫງົບສຸກກັບຈະເລີນຂຶ້ນ ດຳເນີນຊີວິດໂດຍໃຈເຄົາລົບພຣະຜູ້ເປັນເຈົ້າ
ກັບໄດ້ຮັບການປອບໂຍນໃຈຈາກ ພຣະວິນຍານ ສະມາຊິກກໍເລີຍເພີ່ມຫລາຍຂຶ້ນ
9:32 ຕໍ່ມາ ສ່ວນ ເປໂຕ ບັດເດີນທາງໄປຮອດທົ່ວຄູ່ໝ້ອງແລ້ວ ໄດ້ເລີຍລົງມາຍາມ
ພວກຄົນຂອງພຣະເຈົ້າຢູ່ໃນເມືອງ ລິດດາ ນຳ

9:33 ແລ້ວໃນເມືອງນັ້ນ ເປໂຕ ໄດ້ຮັບຜູ້ຊາຍຜູ້ໜຶ່ງຊື່ ໄອເນ ເປັນອຳມະພາດນອນ
ເສື່ອແປດປີ ເຕັມມາແລ້ວ
9:34 ເປໂຕ ຈັ່ງເວົ້າກັບເຂົາວ່າ “ ໄອເນ ເອີຍ ພຣະເຢຊູຄຣິດ ໄດ້ໂຜດໃຫ້ເຈົ້າເຊົາ
ພະຍາດເປັນດີແລ້ວ ໃຫ້ເຈົ້າລຸກຂຶ້ນມ້ຽນເສື່ອນອນຂອງເຈົ້າເດີ້” ແລ້ວໃນຫວ່າງ-
ນັ້ນພໍດີ ໄອເນ ໄດ້ລຸກຂຶ້ນ
9:35 ແລ້ວໝົດຄູ່ຄົນທີ່ຢູ່ໃນເມືອງ ລິດດາ ກັບ ຊາໂຣນ ໄດ້ເຫັນເຫດການນີ້ ຈັ່ງ
ກັບໃຈມາຫາພຣະຜູ້ເປັນເຈົ້າ
9:36 ບັດນີ້ ໃນເມືອງ ໂຢບປາ ມີຍິງຄົນໜຶ່ງທີ່ເປັນລູກສິດຊື່ ຕາບີທາ ທີ່ພາສາເກ-
ຣັກແປວ່າ ໂດຣະກາ ຍິງຄົນນີ້ເຄີຍເຮັດການດີການກຸສົນຫລາຍ
9:37 ແລ້ວໃນຕອນນັ້ນມັນເປັນທີ່ວ່າ ນາງນີ້ເກີດປ່ວຍແຮງແລ້ວກໍຕາຍໄປ ແລ້ວບັດ
ຄົນຢູ່ນັ້ນອາບນ້ຳສົບແລ້ວ ຈັ່ງວາງໄວ້ໃນຫ້ອງຊັ້ນເທິງ
9:38 ແລ້ວເນື່ອງຈາກວ່າ ເມືອງ ລິດດາ ຢູ່ໃກ້ກັບເມືອງ ໂຢບປາ ພວກລູກສິດຢູ່
ໂຢບປາ ໄດ້ຍິນວ່າ ເປໂຕ ຢູ່ເມືອງ ລິດດາ ນັ້ນ ຈັ່ງໃຊ້ຜູ້ຊາຍສອງຄົນໄປເຊີນ
ລາວ ມາຫາໄວ ຢ່າໃຫ້ຊ້າຫລາຍ
9:39 ສ່ວນ ເປໂຕ ກໍລຸກຂຶ້ນໄປກັບເຂົາ ບັດຮອດແລ້ວເຂົາພາ ລາວ ຂຶ້ນໄປໃນຫ້ອງ
ຊັ້ນເທິງ ໝ້ອງນັ້ນພວກແມ່ໝ້າຍກໍຢືນຢູ່ນຳ ເປໂຕ ພາກັນຮ້ອງໄຫ້ ກັບຊີ້ໃຫ້ເບິ່ງ
ເສື້ອຄຸມກັບເສື້ອຜ້າຕ່າງໆ ເປັນແນວຝີມືຂອງ ໂດຣະກາ ເຄີຍໄດ້ເຮັດຕອນຍັງຢູ່
9:40 ສ່ວນ ເປໂຕ ໄດ້ສັ່ງໃຫ້ໝົດຄູ່ຄົນອອກໄປທາງນອກກ່ອນ ແລ້ວຄຸກເຂົ່າລົງ
ອະທິຖານວອນຂໍກັບພຣະເຈົ້າ ອະທິຖານແລ້ວກໍຫັນມາທາງສົບຂອງ ຕາບີທາ
ນັ້ນ ບອກວ່າ “ ຕາບີທາ ເອີຍ ໃຫ້ລຸກຂຶ້ນເດີ້” ຕາບີທາ ກໍມືນຕາ ບັດເຫັນ ເປໂຕ
ຈັ່ງລຸກຂຶ້ນນັ່ງ
9:41 ເປໂຕ ເລີຍເດ່ມື ລາວ ອອກ ຊ່ອຍໂຊມ ຕາບີທາ ຂຶ້ນ ແລ້ວບັດໄດ້ເອີ້ນຄົນ
ຂອງພຣະເຈົ້າ ກັບພວກແມ້ໝ້າຍເຂົ້າມາອີກ ກໍໄດ້ມອບ ຕາບີທາ ໃຫ້ພວກເຂົາມີ
ຊີວິດຄືເກົ່າ
9:42 ແລ້ວເຫດການອັດສະຈັນນີ້ໄດ້ແຜ່ອອກໄປຮອດທົ່ວເມືອງ ໂຢບປາ ແລ້ວຈັ່ງ
ມີຄົນຫລວງຫລາຍໄດ້ຮັບເຊື່ອໃນພຣະຜູ້ເປັນເຈົ້າ

9:43 ແລ້ວຕໍ່ມາ ເປໂຕ ກໍອາໄສຢູ່ໃນເມືອງ ໂຢບປາ ອີກຫລາຍມື້ ຢູ່ກັບຄົນໜຶ່ງຊື່
ຊີໂມນ ເປັນຊ່າງຟອກໜັງ

## ກິດຈະການ ບົດທີ 10

10:1 ແລ້ວມີຜູ້ຊາຍຄົນໜຶ່ງຊື່ ໂກເນລີໂອ ອາໄສຢູ່ໃນເມືອງ ກາຍຊາເຣຍ ເປັນ
ນາຍຮ້ອຍໃນກອງທະຫານ ອີຕາລີ
10:2 ໂກເນລີໂອ ນີ້ເປັນຄົນມີຄວາມເຊື່ອໝັ້ນ ກັບເຄົາລົບພຣະເຈົ້າ ພ້ອມທັງຄອບ-
ຄົວຂອງ ລາວ ຊຶ່ງເຄີຍບໍລິຈາກຊ່ອຍຄົນຫລາຍ ກັບອະທິຖານເວົ້ານຳພຣະເຈົ້າຢູ່
ສະເໝີ
10:3 ແລ້ວນາຍຮ້ອຍນີ້ໄດ້ເຫັນນິມິດ ເປັນເວລາປະມານບ່າຍສາມໂມງ ໃນນິມິດ
ນັ້ນ ລາວ ເຫັນເທວະທູດອົງໜຶ່ງຂອງພຣະເຈົ້າເຂົ້າມາຫາ ລາວ ເວົ້າວ່າ “ ໂກເນລີ-
ໂອ ເອີຍ”
10:4 ບັດ ໂກເນລີໂອ ຫລຽວເບິ່ງເທວະທູດອົງນັ້ນ ລາວກໍເກີດຕົກໃຈຢ້ານຈັ່ງຖາມ-
ວ່າ “ເປັນຈັ່ງໃດ ພຣະຜູ້ເປັນເຈົ້າ ເຈົ້າຂ້າ” ເທວະທູດຈັ່ງຕອບ ລາວ ວ່າ “ຄຳອະທິ-
ຖານກັບການບໍລິຈາກຊ່ອຍຄົນອື່ນຂອງເຈົ້ານັ້ນ ໄດ້ຂຶ້ນໄປເປັນທີ່ລະນຶກທີ່ຊອບຕໍ່
ພຣະເຈົ້າແລ້ວ
10:5 ບັດນີ້ ໃຫ້ເຈົ້າໃຊ້ຄົນໄປເມືອງ ໂຢບປາ ໄປຖາມຫາຄົນໜຶ່ງຊື່ວ່າ ຊີໂມນ ທີ່
ເອີ້ນວ່າ ເປໂຕ ເດີ້
10:6 ເປໂຕ ພັກຢູ່ກັບຄົນໜຶ່ງຊື່ ຊີໂມນ ເປັນຊ່າງຟອກໜັງ ຊຶ່ງເຮືອນຂອງເຂົາຢູ່
ຮິມຝັ່ງທະເລ ເປໂຕ ນີ້ຊິບອກເຈົ້າເຖິງແນວທີ່ເຈົ້າຄວນຊິເຮັດ”
10:7 ແລ້ວບັດເທວະທູດເວົ້າກັບ ໂກເນລີໂອ ໄດ້ອອກໄປແລ້ວ ໂກເນລີໂອ ໄດ້ເອີ້ນ
ຄົນໃຊ້ສອງຄົນກັບທະຫານຄົນໜຶ່ງທີ່ເປັນຄົນມີຄວາມເຊື່ອໝັ້ນຄືກັນ ຜູ້ທີ່ເຄີຍ
ຮັບໃຊ້ ລາວ ຢູ່ເປັນປະຈຳ
10:8 ບັດ ໂກເນລີໂອ ໄດ້ບອກຄູ່ແນວນີ້ໃຫ້ພວກເຂົາແລ້ວ ລາວ ຈັ່ງໃຊ້ພວກເຂົາ
ອອກໄປເມືອງ ໂຢບປາ

10:9 ແລ້ວບັດເຊົ້າມື້ໃໝ່ມາ ຕອນຄົນໝູ່ນັ້ນພວມເດີນທາງໄປໃກ້ຮອດເມືອງ ໂຢບ-
ປາ ແລ້ວ ສ່ວນ ເປໂຕ ລາວ ໄດ້ຂຶ້ນໄປຢູ່ເທິງຫລັງຄາ ເພື່ອຊິອະທິຖານເວົ້ານຳ
ພຣະເຈົ້າ ເປັນເວລາປະມານທ່ຽງ
10:10 ແລ້ວ ລາວ ເກີດຫິວຄືດຢາກກິນເຂົ້າແຮງ ແຕ່ຕອນເຂົາພວມຈັດແນວກິນ
ລາວກໍເລີຍເຊືອບໆ ຝັນໄປ
10:11 ແລ້ວ ລາວ ຝັນເຫັນທ້ອງຟ້າແຫວກອອກໄປ ແລ້ວມີແນວໜຶ່ງຄືຜ້າສີ່ຫລ່ຽມ
ຜືນໃຫຍ່ໆ ຜູກໄວ້ທັງສີ່ແຈຖືກຢ່ອນລົງມາວາງເທິງແຜ່ນດິນໂລກ
10:12 ແລ້ວໃນນັ້ນມີສັດບົກໝົດຄູ່ແນວທີ່ມີຢູ່ເທິງໂລກ ຄືສັດສີ່ຕີນ ສັດປ່າ ສັດເລືອ-
ຄານ ກັບນົກທີ່ຢູ່ເທິງຟ້າ
10:13 ແລ້ວມີສຽງຂອງຜູ້ມີອຳນາດເວົ້າກັບ ລາວ ວ່າ “ ເປໂຕ ເອີຍ ໃຫ້ລຸກຂຶ້ນຂ້າ
ກິນ ໂລດ ເດີ້”
10:14 ສ່ວນ ເປໂຕ ຈັ່ງຕອບວ່າ “ບໍ່ໄດ້ດອກພຣະຜູ້ເປັນເຈົ້າ ເຈົ້າຂ້າ ຜູ້ຂ້າບໍ່ເຄີຍກິນ
ແນວທີ່ເປັນມົນທິນແນວຕ້ອງຫ້າມ”
10:15 ແລ້ວສຽງນັ້ນໄດ້ເວົ້າ ລາວ ເປັນເທື່ອທີ່ສອງວ່າ “ແນວທີ່ພຣະເຈົ້າໄດ້ຊຳລະ
ໃຫ້ສະອາດບໍລິສຸດແລ້ວ ບໍ່ໃຫ້ວ່າເປັນມົນທິນເດີ້”
10:16 ໄດ້ເຮັດຈັ່ງຊັ້ນເຖິງສາມເທື່ອ ແລ້ວຜືນນັ້ນກໍຖືກຮັບຂຶ້ນໄປອີກໃນທ້ອງຟ້າ
10:17 ບັດ ເປໂຕ ພວມຄຶດສົງໄສໃນໃຈເຖິງນິມິດທີ່ ລາວ ໄດ້ເຫັນນັ້ນ ວ່າມີຄວາມໝ
າຍຈັ່ງໃດ ນີ້ແຫລະ ຄົນໝູ່ນັ້ນທີ່ນາຍຮ້ອຍ ໂກເນລີໂອ ໄດ້ໃຊ້ໄປຫັ້ນ ຖາມຫາ
ເຮືອນພັກຂອງ ຊີໂມນ ຈັ່ງໄດ້ຢືນຢູ່ໜ້າປະຕູຮົ້ວ
10:18 ແລ້ວຈັ່ງຮ້ອງເອີ້ນຖາມຂຶ້ນເຖິງວ່າ ຊີໂມນ ທີ່ເອີ້ນວ່າ ເປໂຕ ໄດ້ພັກຢູ່ຫັ້ນ
10:19 ບັດ ເປໂຕ ພິຈາລະນາໃໝ່ເລື່ອງນິມິດທີ່ ລາວ ຝັນນັ້ນ ພຣະວິນຍານ ໄດ້ເວົ້າ
ກັບ ລາວ ວ່າ “ນີ້ແຫລະ ມີຜູ້ຊາຍສາມຄົນພວມຕາມຫາເຈົ້າຢູ່
10:20 ຈັ່ງຊັ້ນ ໃຫ້ລຸກຂຶ້ນລົງໄປຊັ້ນລຸ່ມ ແລ້ວກໍໄປກັບພວກເຂົາເດີ້ ຢ່າລັງເລຄຶດສົງ-
ໄສອີຫຍັງເລີຍ ຍ້ອນວ່າເຮົາໄດ້ໃຊ້ເຂົາມາ”
10:21 ບັດນີ້ ເປໂຕ ຈັ່ງລົງໄປຫາຄົນໝູ່ນັ້ນທີ່ ໂກເນລີໂອ ໃຊ້ມາແລ້ວເວົ້າວ່າ “ເອີ້
ນີ້ແຫລະ ຂ້ອຍນີ້ເນາະ ເປັນຄົນທີ່ພວກເຈົ້າມາຫາ ພວກເຈົ້າມາເລື່ອງຫຍັງ”

10:22 ແລ້ວພວກເຂົາຕອບວ່າ "ນາຍຮ້ອຍ ໂກເນລີໂອ ຊຶ່ງ ລາວ ເປັນຄົນຍຸດຕິທຳ
ເຄົາລົບພຣະເຈົ້າ ກັບມີຊື່ສຽງດີໃນໝູ່ຄົນ ຊາວຢິວ ລາວ ໄດ້ຮັບຄຳສັ່ງຈາກພຣະ-
ເຈົ້າໂດຍຜ່ານທາງເທວະທູດບໍລິສຸດຂອງເພິ່ນ ໃຫ້ມາເຊີນເຈົ້າໄປເຮືອນ ລາວ ກໍ
ເພື່ອຊິໄດ້ຮັບຟັງຖ້ອຍຄຳຂອງເຈົ້າ"
10:23 ບັດນີ້ ເປໂຕ ຈັ່ງເຊີນພວກເຂົາເຂົ້າມາພັກແຮມຢູ່ນັ້ນ ແລ້ວບັດຮອດມື້ອື່ນ
ເຊົ້າ ເປໂຕ ໄດ້ໄປນຳພວກເຂົາ ພ້ອມທັງມີໝູ່ພີ່ນ້ອງຜູ້ລາງຄົນຢູ່ເມືອງ ໂຢບປາ
ໄດ້ໄປນຳ
10:24 ແລ້ວບັດຮອດມື້ໃໝ່ຫລັງຈາກພວກເຂົາໄດ້ໄປຮອດເມືອງ ກາຍຊາເຣຍ
ຫວ່າງນັ້ນນາຍຮ້ອຍ ໂກເນລີໂອ ຊຶ່ງພວມຄອຍຖ້າຮັບຢູ່ນັ້ນ ກໍໄດ້ເຊີນຍາດພີ່-
ນ້ອງກັບໝູ່ພວກສະນິດຂອງ ລາວ ໃຫ້ມາຮ່ວມກັນນຳ
10:25 ພໍແຕ່ ເປໂຕ ເຂົ້າໄປນັ້ນ ໂກເນລີໂອ ກໍຕ້ອນຮັບຢ່າງດີ ໝອບລົງຂາບໄຫວ້ຕໍ່
ໜ້າ ລາວ
10:26 ສ່ວນ ເປໂຕ ເລີຍຈັບຜູ້ໂຊມຂຶ້ນແລ້ວເວົ້າວ່າ "ຢືນຂຶ້ນທ້ອນ ໂຕຂ້ອຍນີ້ກໍເປັນ
ແຄ່ຄົນຄືກັນ"
10:27 ແລ້ວບັດ ເປໂຕ ພວມເວົ້າກັບນາຍຮ້ອຍ ລາວກໍເຂົ້າໄປພໍ້ຄົນຫລວງຫລາຍ
ມາໂຮມກັນຢູ່ນັ້ນ
10:28 ລາວ ຈັ່ງເວົ້າກັບໝູ່ຄົນຢູ່ນັ້ນວ່າ "ພວກເຈົ້າກໍຮູ້ດີຢູ່ແລ້ວວ່າ ກົດບັນຍັດຫ້າມ
ໄວ້ບໍ່ໃຫ້ຄົນຊາດ ຢິວ ຄືເຮົາ ຄົບກັນຫລືເຂົ້າຢ້ຽມຍາມກັນກັບຄົນຕ່າງຊາດ ແຕ່
ພຣະເຈົ້າໄດ້ສຳແດງໃຫ້ຂ້ອຍເຂົ້າໃຈຊັດດີແລ້ວວ່າ ຂ້ອຍບໍ່ຄວນເອີ້ນຜູ້ໃດຜູ້ໜຶ່ງ
ວ່າ ສາມັນຫລືມົນທິນທີ່ຕ້ອງຫ້າມເລີຍ
10:29 ຈັ່ງຊັ້ນ ບັດນາຍຮ້ອຍໃຊ້ຄົນໄປເອີ້ນ ຂ້ອຍມາ ໂລດ ບໍ່ໄດ້ຕໍ່ຕ້ານເລີຍ ແລ້ວ
ບັດນີ້ຂ້ອຍຂໍຖາມວ່າ ພວກເຈົ້າເອີ້ນຂ້ອຍມາຍ້ອນເລື່ອງຫຍັງ"
10:30 ນາຍຮ້ອຍ ໂກເນລີໂອ ຈັ່ງຕອບວ່າ "ສີ່ມື້ມາແລ້ວນີ້ ຂ້ອຍພວມຖືການອົດອາ-
ຫານຢູ່ຈົນຮອດຍາມນີ້ ແລ້ວປະມານເວລາບ່າຍສາມໂມງຂ້ອຍກໍຢູ່ໃນເຮືອນຂອງ
ຂ້ອຍເອງ ພວມອະທິຖານວອນຂໍຢູ່ ແລ້ວ ນີ້ແຫລະ ມີຜູ້ຊາຍຄົນໜຶ່ງໃສ່ເສື້ອຂາວ
ອອກແສງຈ້າ ຢືນຢູ່ກົງໜ້າຂ້ອຍ

10:31 ແລ້ວໄດ້ເວົ້າວ່າ ‘ ໂກເນລິໂອ ເອີຍ ພຣະເຈົ້າໄດ້ຍິນໄດ້ຟັງຄຳອະທິຖານຂອງ
ເຈົ້າແລ້ວ ກັບການບໍລິຈາກຊ່ອຍຄົນທີ່ເຈົ້າໄດ້ເຮັດນັ້ນ ກໍເປັນທີ່ລະນຶກອັນທີ່ຊອບ
ໃນສາຍຕາຂອງພຣະເຈົ້າ
10:32 ຈັ່ງຊັ້ນ ໃຫ້ໃຊ້ຄົນໄປເມືອງ ໂຢບປາ ເດີ້ ແລ້ວໃຫ້ພວກເຂົາເຊີນ ຊີໂມນ ທີ່
ເອີ້ນວ່າ ເປໂຕ ມາ ຜູ້ນັ້ນພັກອາໄສຢູ່ໃນເຮືອນຂອງ ຊີໂມນ ຊ່າງຟອກໜັງ ຊຶ່ງຢູ່
ເຮືອນຕິດຝັ່ງທະເລ ພໍບັດ ເປໂຕ ຜູ້ມາຮອດນີ້ແລ້ວ ລາວ ຊິເວົ້າກ່າວໃຫ້ເຈົ້າຟັງ’
10:33 ແລ້ວໃນທວ່າງນັ້ນພໍດີ ຂ້ອຍຈັ່ງໃຊ້ຄົນໄປເຊີນເຈົ້າມາ ແລ້ວທີ່ເຈົ້າມາກໍເປັນ
ການດີ ບັດນີ້ ພວກຂ້ອຍກໍພ້ອມກັນຢູ່ນີ້ຕໍ່ໜ້າພຣະເຈົ້າ ເພື່ອຢາກຮັບຟັງໝົດຄູ່
ແນວທີ່ພຣະເຈົ້າໄດ້ບອກສອນເຈົ້ານັ້ນ”
10:34 ສ່ວນ ເປໂຕ ໄດ້ເປີດປາກເວົ້າວ່າ “ຂ້ອຍຮູ້ແຈ້ງເຫັນຈິງມາແລ້ວ ວ່າ ພຣະເຈົ້າ
ບໍ່ໄດ້ລຳອຽງເຂົ້າຂ້າງຜູ້ໃດເລີຍ
10:35 ແຕ່ວ່າ ຜູ້ໃດກໍຕາມ ບໍ່ວ່າຊາດໃດ ທີ່ເຄົາລົບພຣະເຈົ້າ ກັບໄດ້ເຮັດແນວຖືກ
ແນວແມ່ນ ຊຶ່ງເປັນທີ່ຊອບເປັນທີ່ຍອມຮັບຂອງເພິ່ນ
10:36 ແມ່ນ ພຣະຄຳ ທີ່ພຣະເຈົ້າໄດ້ມອບໃຫ້ກັບຊົນຊາດ ອິສະຣາເອນ ນັ້ນ ຄືການ
ປະກາດສັນຕິພາບໂດຍທາງ ພຣະເຢຊູຄຣິດ (ວ່າເພິ່ນເປັນພຣະຜູ້ເປັນເຈົ້າຂອງ
ຄົນໝົດທັງປວງເລີຍ)
10:37 ພຣະຄຳ ຕອນນັ້ນຊຶ່ງພວກເຈົ້າກໍຮູ້ຈັກແລ້ວ ທີ່ໄດ້ປະກາດຮອດທົ່ວແຄວ້ນ
ຢູດາຍ ຈາກແຄວ້ນ ກາລີເລ ອອກໄປ ຫລັງຈາກ ໂຢຮັນ ໄດ້ເລີ່ມປະກາດການຮັບ
ຈຸ່ມນໍ້ານັ້ນ
10:38 ຄືພຣະເຈົ້າໄດ້ແຕ່ງຕັ້ງເຈີມ ພຣະເຢຊູ ຊາວ ນາຊາເຣັດ ນັ້ນເອງໂດຍ ພຣະ-
ວິນຍານ ກັບໂດຍລິດທານຸພາບ ແມ່ນຜູ້ທີ່ອອກໄປເຮັດແຕ່ແນວດີແນວງາມ ກັບ
ໄດ້ປົວຄົນທີ່ຖືກຜີ ພະຍາມານ ຊາຕານບຽດບຽນໃຫ້ເຊົາເປັນດີ ຍ້ອນວ່າພຣະເຈົ້າ
ສະຖິດຢູ່ນຳເພິ່ນ
10:39 ແລ້ວພວກເຮົາໄດ້ເປັນຫຼັກຖານພະຍານເຖິງ ກິດຈະການ ທັງໝົດນີ້ ທີ່ເພິ່ນ
ໄດ້ເຮັດ ທັງໃນດິນແດນຂອງຊົນຊາດ ຢິວ ກັບໃນເມືອງ ເຢຣູຊາເລັມ ແລ້ວໃນທີ່-
ສຸດເພິ່ນຖືກເຂົາຂ້າໂດຍຫ້ອຍໄວ້ເທິງຫລັກໄມ້

10:40 ແຕ່ວ່າພຣະເຈົ້າໄດ້ໂຜດໃຫ້ເພິ່ນມີຊີວິດເປັນຂຶ້ນມາຈາກຕາຍໃນມື້ທີ່ສາມ
ແລ້ວໃຫ້ຄົນເຫັນເພິ່ນຢ່າງເປີດເຜີຍ
10:41 ແຕ່ບໍ່ແມ່ນຕໍ່ຄົນທົ່ວໄປ ແຕ່ຕໍ່ຜູ້ເປັນພະຍານຕາມທີ່ພຣະເຈົ້າໄດ້ເລືອກໄວ້
ແຕ່ກ່ອນ ຄືຕໍ່ພວກເຮົາຜູ້ທີ່ເຄີຍໄດ້ກິນໄດ້ດື່ມກັບເພິ່ນ ຫລັງຈາກເພິ່ນໄດ້ມີຊີວິດ
ເປັນຂຶ້ນມາຈາກຕາຍແລ້ວ
10:42 ແລ້ວເພິ່ນໄດ້ສັ່ງພວກເຮົາໄວ້ ໃຫ້ອອກໄປປະກາດ ເປັນພະຍານເຖິງເລື່ອງ
ເພິ່ນຕໍ່ຄົນທັງຫລາຍວ່າ ເພິ່ນໄດ້ຮັບມອບການແຕ່ງຕັ້ງໄວ້ຈາກພຣະເຈົ້າໃຫ້ເປັນຜູ້
ຕັດສິນພິພາກສາທັງຄົນເປັນຄົນຕາຍ
10:43 ແລ້ວຜູ້ເປັນປາກເປັນສຽງຂອງພຣະເຈົ້າທັງຫລາຍໄດ້ເປັນພະຍານເຖິງເພິ່ນ
ວ່າ ໂດຍໃນພຣະນາມຂອງເພິ່ນນັ້ນ ຊິໄດ້ຮັບການໃຫ້ອະໄພໂທດຄວາມຜິດບາບ
ທັງສິ້ນສຸດຂອງເຂົາ”
10:44 ບັດ ເປໂຕ ຍັງເວົ້າຄວາມນັ້ນຢູ່ ພຣະວິນຍານ ກໍລົງມາປະທັບຢູ່ກັບໝົດຄູ່
ຄົນທີ່ຟັງ ພຣະຄໍາ ນັ້ນ
10:45 ແລ້ວຝ່າຍຜູ້ທີ່ຖືພິທີຕັດ( ຊາວຢິວ )ທີ່ໄດ້ຮັບເຊື່ອ ຊຶ່ງໄດ້ມານໍາ ເປໂຕ ນັ້ນ ກໍ
ແປກໃຈເປັນຕາງຶດ ຍ້ອນວ່າພວກຄົນຕ່າງຊາດນັ້ນໄດ້ຮັບການຫຸ້ມເທ ພຣະວິນ-
ຍານ ໃຫ້ເປັນຂອງຂວັນຄືກັນ
10:46 ຄືພວກຢິວຢູ່ນັ້ນໄດ້ຍິນຄົນຕ່າງຊາດໝູ່ນັ້ນ ເວົ້າເປັນພາສາຕ່າງໆ ຍົກຍ້ອງ
ສັນລະເສີນພຣະເຈົ້າຢູ່ຫັ້ນ ແລ້ວ ເປໂຕ ຈັ່ງຖາມຄືນວ່າ
10:47 “ມີໃຜແໜ່ຊິຫ້າມຄົນໝູ່ນີ້ ບໍ່ໃຫ້ເຂົາຮັບການຈຸ່ມນໍ້າໄດ້ ຊຶ່ງເຂົາໄດ້ຮັບ ພຣະ-
ວິນຍານ ຄືກັນກັບພວກເຮົາແລ້ວ”
10:48 ແລ້ວ ເປໂຕ ຈັ່ງສັ່ງໃຫ້ພວກເຂົາຮັບການຈຸ່ມນໍ້າໃນພຣະນາມຂອງພຣະຜູ້-
ເປັນເຈົ້າ ແລ້ວພວກເຂົາໄດ້ຂໍ ເປໂຕ ໃຫ້ພັກຢູ່ນໍາເຂົາອີກຈັກສອງສາມມື້

## ກິດຈະການ ບົດທີ 11

11:1 ຝ່າຍພວກທູດພິເສດກັບໝູ່ພີ່ນ້ອງທັງຫລາຍທີ່ຢູ່ໃນແຄວັນ ຢູດາຍ ໄດ້ຍິນວ່າ
ຄົນຕ່າງຊາດໄດ້ຮັບເອົາ ພຣະຄໍາ ຂອງພຣະເຈົ້າຄືກັນ

11:2 ບັດ ເປໂຕ ຂຶ້ນມາຮອດເມືອງ ເຢຣູຊາເລັມ ແລ້ວ ພວກທີ່ຖືພິທີຕັດ(ຄື ຊາວ-
ຢິວ )ຈັ່ງຕໍ່ວ່າໂຕ້ຖຽງກັບ ລາວ
11:3 ວ່າ "ເຈົ້າໄປຫາຄົນຕ່າງຊາດຜູ້ທີ່ບໍ່ໄດ້ຖືພິທີຕັດ ກັບໄດ້ກິນຮ່ວມກັບເຂົາເນາະ"
11:4 ແຕ່ສ່ວນ ເປໂຕ ລາວ ໄດ້ອະທິບາຍໃຫ້ເຂົາຟັງຕັ້ງແຕ່ຕົ້ນຕາມລໍາດັບ
11:5 ວ່າ "ບັດຂ້ອຍພວມອະທິຖານຢູ່ໃນເມືອງ ໂຢບປາ ກໍເລີຍເຊືອບໆ ຝັນໄປ
ເຫັນນິມິດຢ່າງໜຶ່ງ ຄືໄດ້ເຫັນແນວໜຶ່ງຄືກັນກັບຜ້າສີ່ຫລ່ຽມຜືນໃຫຍ່ໆ ຜູກໄວ້ທັງ
ສີ່ແຈຖືກຢ່ອນລົງມາຈາກສະຫວັນມາຍັງຂ້ອຍນີ້
11:6 ຂ້ອຍຈັ່ງພິຈາລະນາຈ້ອງເບິ່ງນັ້ນ ເຫັນສັດບົກສີ່ຕີນຂອງໂລກນີ້ ສັດປ່າ ສັດ-
ເລືອຄານ ກັບນົກທີ່ບິນຢູ່ເທິງທ້ອງຟ້າ
11:7 ແລ້ວຂ້ອຍໄດ້ຍິນສຽງຂອງຜູ້ມີອໍານາດເວົ້າກັບຂ້ອຍວ່າ ' ເປໂຕ ເອີຍ ໃຫ້ລຸກ-
ຂຶ້ນ ຂ້າກິນເດີ້'
11:8 ແຕ່ຂ້ອຍຕອບວ່າ 'ບໍ່ໄດ້ດອກພຣະຜູ້ເປັນເຈົ້າ ເຈົ້າຂ້າ ແນວສາມັນກັບມົນທິນ
ບໍ່ເຄີຍເຂົ້າປາກຂອງຜູ້ຂ້າຈັກເທື່ອເລີຍ'
11:9 ແຕ່ສຽງນັ້ນໄດ້ເວົ້າຈາກຟ້າເປັນເທື່ອທີ່ສອງວ່າ 'ແນວທີ່ພຣະເຈົ້າໄດ້ຊໍາລະໃຫ້
ສະອາດບໍລິສຸດແລ້ວນັ້ນ ບໍ່ໃຫ້ວ່າເປັນຂອງມົນທິນເດີ້'
11:10 ໄດ້ເປັນຈັ່ງຊັ້ນຮອດສາມເທື່ອ ແລ້ວແນວໝູ່ນັ້ນທັງໝົດກໍຖືກຮັບຂຶ້ນໄປເທິງ
ຟ້າອີກ
11:11 ແລ້ວນີ້ແຫລະ ໃນຫວ່າງນັ້ນພໍດີ ໄດ້ມີຜູ້ຊາຍສາມຄົນມາຢືນຢູ່ໜ້າເຮືອນທີ່
ຂ້ອຍພັກຢູ່ ຖືກໃຊ້ມາຈາກເມືອງ ກາຍຊາເຣຍ ໃຫ້ມາຫາຂ້ອຍນີ້
11:12 ແລ້ວ ພຣະວິນຍານ ຈັ່ງເຊີນໃຫ້ຂ້ອຍໄປນໍາເຂົາໂດຍບໍ່ຕ້ອງລັງເລໃຈສົງໄສ
ອີຫຍັງເລີຍ ນອກຈາກນັ້ນພວກພີ່ນ້ອງທັງຫົກຄົນພວກນີ້ກໍໄດ້ໄປກັບຂ້ອຍນໍາ
ພວກເຮົາຈັ່ງເຂົ້າໄປໃນເຮືອນຂອງນາຍຮ້ອຍຄົນນັ້ນ
11:13 ນາຍຮ້ອຍຈັ່ງໄດ້ເວົ້າໃຫ້ພວກເຮົາຟັງວ່າໄດ້ເຫັນເທວະທູດອົງໜຶ່ງໄດ້ເຂົ້າມາ
ຢືນຢູ່ໃນເຮືອນຂອງເຂົາບອກວ່າ 'ໃຫ້ໃຊ້ຄົນໄປເມືອງ ໂຢບປາ ໄປເຊີນ ຊີໂມນ ທີ່
ເອີ້ນວ່າ ເປໂຕ ມາເດີ້

11:14 ເປໂຕ ນັ້ນຊິໄດ້ເວົ້າຖ້ອຍຄຳໃຫ້ເຈົ້າຟັງ ເຖິງທາງທີ່ເຈົ້າທັງຄອບຄົວຂອງເຈົ້າ
ຊິໄດ້ລອດພົ້ນ'
11:15 ແລ້ວບັດຂ້ອຍຕັ້ງຕົ້ນພວມເວົ້າຢູ່ຫັ້ນ ພໍດີ ພຣະວິນຍານ ກໍລົງມາປະທັບຢູ່ກັບ
ພວກເຂົາ ຄືກັນກັບທີ່ໄດ້ລົງມາຢູ່ກັບພວກເຮົາບັດທຳອິດນັ້ນເນາະ
11:16 ແລ້ວພໍດີຂ້ອຍຄຶດຊອດເຫັນຄຳເວົ້າຂອງພຣະຜູ້ເປັນເຈົ້ານັ້ນ ທີ່ເພິ່ນໄດ້ເວົ້າ
ໄວ້ວ່າ ' ໂຢຮັນ ໃຫ້ຮັບການຈຸ່ມນ້ຳກໍແມ່ນຢູ່ ແຕ່ພວກເຈົ້າຊິຮັບການຈຸ່ມດ້ວຍ
ພຣະວິນຍານ '
11:17 ຈັ່ງຊັ້ນ ຄັ່ນພຣະເຈົ້າໄດ້ໂຜດໃຫ້ ພຣະວິນຍານ ເປັນຂອງຂວັນໃຫ້ກັບເຂົາ
ຄືກັນກັບໃຫ້ກັບເຮົານັ້ນທີ່ໄດ້ຮັບເຊື່ອໃນພຣະເຢຊູຄຣິດເຈົ້າ ບັດນີ້ຂ້ອຍນີ້ເປັນຜູ້-
ໃດທີ່ຊິມີສິດຂັດຂືນພຣະປະສົງຂອງພຣະເຈົ້າໄດ້"
11:18 ບັດພວກເຂົາໄດ້ຍິນຄຳແນວໝູ່ນັ້ນຂອງ ເປໂຕ ເວົ້າກໍມິດລົງ ແລ້ວໄດ້ສາທຸ
ການພຣະເຈົ້າວ່າ "ບັດນີ້ ພຣະເຈົ້າໄດ້ໂຜດໃຫ້ຄົນຕ່າງຊາດມີສິດໃນການກັບໃຈໃ
ໝ່ເຖິງມີຊີວິດລອດພົ້ນຄືກັນກັບພວກເຮົາ"
11:19 ບັດນີ້ ຝ່າຍພີ່ນ້ອງທັງຫລາຍທີ່ໄດ້ກະຈັກກະຈາຍອອກໄປຍ້ອນການຂົ່ມເຫງ
ທີ່ເກີດເນື່ອງຈາກເລື່ອງ ຊະເຕຟາໂນ ນັ້ນ ໄດ້ ອົບພະຍົບ ໄປຮອດເມືອງ ຟອຍນິ-
ເກ ເກາະ ກຸບໂຣ ກັບເມືອງ ອັນຕິໂອເຂຍ ພວກນີ້ໄດ້ປ່າວປະກາດ ພຣະຄຳ ຕໍ່
ພວກຢິວແຕ່ພວກດຽວ
11:20 ແລ້ວມີຜູ້ລາງຄົນໃນພວກອົບພະຍົບນັ້ນ ເປັນຊາວເກາະ ກຸບໂຣ ກັບຊາວ
ກີເຣເນ ບັດຮອດເມືອງ ອັນຕິໂອເຂຍ ກໍໄດ້ປະກາດຂ່າວປະເສີດເລື່ອງພຣະເຢ-
ຊູຄຣິດເຈົ້າໃຫ້ ຊາວຢິວ-ເກຣັກ ນຳ
11:21 ແລ້ວມືຂອງພຣະຜູ້ເປັນເຈົ້າໄດ້ອວຍພອນການປະກາດຂອງເຂົາ ຈັ່ງມີຄົນ
ຫລວງຫລາຍໄດ້ຮັບເຊື່ອຫັນມາຫາພຣະຜູ້ເປັນເຈົ້າ
11:22 ແລ້ວຂ່າວນີ້ໄດ້ແຜ່ໄປຮອດຫູຂອງພີ່ນ້ອງກຸ່ມຜູ້ເຊື່ອໃນເມືອງ ເຢຣູຊາເລັມ
ເຂົາຈັ່ງວ່າສົມຄວນທີ່ຊິໃຊ້ ບາຣະນາບາ ໄປເຖິງເມືອງ ອັນຕິໂອເຂຍ

11:23 ບັດ ບາຣະນາບາ ມາຮອດທັ້ນແລ້ວ ກໍເກີດດີອົກດີໃຈຫລາຍບັດໄດ້ເຫັນຜົນ
ຂອງພຣະກະລຸນາທີຄຸນຂອງພຣະເຈົ້າທີ່ໄດ້ເກີດຜົນຢູ່ນັ້ນ ຈັ່ງໄດ້ໜຸນນ້ຳໃຈຄົນໝູ່
ນັ້ນໃຫ້ມີໃຈຕັ້ງໝັ້ນຢູ່ກັບພຣະເຢຊູຄຣິດເຈົ້າ
11:24 ຄື ບາຣະນາບາ ນີ້ເປັນຄົນດີ ປະກອບດ້ວຍ ພຣະວິນຍານ ກັບຄວາມເຊື່ອ
ແລ້ວຈຳນວນຜູ້ທີ່ຮັບເຊື່ອເຂົ້າໃນອົງພຣະຜູ້ເປັນເຈົ້າກໍເພີ່ມຂຶ້ນຫລວງຫລາຍ
11:25 ແລ້ວຫລັງຈາກນັ້ນ ບາຣະນາບາ ໄດ້ໄປເມືອງ ຕາໂຊ ເພື່ອຕາມຫາ ໂຊໂລ
11:26 ບັດໄດ້ຮັບ ລາວ ແລ້ວ ຈັ່ງພາກັນກັບມາເມືອງ ອັນຕິໂອເຂຍ ແລ້ວກໍຢູ່ທັ້ນ
ຕະຫລອດໜຶ່ງປີ ໄດ້ຮ່ວມກັນກັບກຸ່ມຜູ້ເຊື່ອ ຈັ່ງໄດ້ສອນຄົນຫລວງຫລາຍຢູ່ທັ້ນ
ແລ້ວຄົນໄດ້ຕັ້ງຊື່ເອີ້ນພວກພີ່ນ້ອງລູກສິດວ່າເປັນ ຄຣິສຕຽນ ເປັນເທື່ອທຳອິດໃນ
ເມືອງ ອັນຕິໂອເຂຍ
11:27 ແລ້ວໃນຍາມນັ້ນ ມີພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າໄດ້ລົງມາຈາກ
ເມືອງ ເຢຣູຊາເລັມ ໄປເມືອງ ອັນຕິໂອເຂຍ
11:28 ແລ້ວມີຜູ້ໜຶ່ງໃນໝູ່ພວກຜູ້ປະກາດພຣະຄຳນັ້ນຊື່ວ່າ ອາຄະໂບ ໄດ້ລຸກຂຶ້ນ
ກ່າວໂດຍ ພຣະວິນຍານ ວ່າ ຊິເກີດການອຶດຢາກໝາກຫິວຢ່າງໃຫຍ່ຫລວງທົ່ວ
ແຜ່ນດິນໂລກ ແລ້ວການນັ້ນໄດ້ເກີດຂຶ້ນໃນສະໄໝທີ່ ກາຍຊາກະລາວດີໂອ ເປັນ
ຈັກກະພັດຂອງລາຊະອານາຈັກ ໂຣມ
11:29 ແລ້ວພວກລູກສິດຕັດສິນເອົາເປັນວ່າ ເຂົາຊິຖວາຍຕາມກຳລັງຂອງແຕ່ລະ
ຄົນ ຝາກໄປຊ່ອຍບັນເທົາທຸກໃຫ້ພວກພີ່ນ້ອງທີ່ຢູ່ໃນແຄວ້ນ ຢູດາຍ
11:30 ແລ້ວເຂົາໄດ້ເຮັດຕາມທັ້ນ ຈັ່ງໄດ້ຝາກໄປກັບ ບາຣະນາບາ ກັບ ໂຊໂລ ໄປ
ເຖິງພວກຜູ້ຫລັກຜູ້ໃຫຍ່ຂອງກຸ່ມຜູ້ເຊື່ອທີ່ທຸກຍາກລຳບາກນັ້ນ

## ກິດຈະການ ບົດທີ 12

12:1 ແລ້ວຕອນນັ້ນກະສັດ ເຮໂຣດ ( ອາຄຣິປາ ) ໄດ້ລົງມືເຮັດແນວຮ້າຍກາດໃສ່ຜູ້
ລາງຄົນໃນກຸ່ມຜູ້ເຊື່ອ
12:2 ແລ້ວ ເຮໂຣດ ໄດ້ສັ່ງຂ້າ ຢາໂກໂບ ອ້າຍຂອງ ໂຢຮັນ ໂດຍດາບ
12:3 ບັດເຫັນວ່າການນັ້ນເປັນທີ່ຊອບໃຈຂອງພວກຢິວ ເຮໂຣດ ກໍສັ່ງຈັບ ເປໂຕ
ນຳ (ນີ້ກໍເປັນໃນຍາມນີ້ເທດສະການເຂົ້າຈີ່ທີ່ບໍ່ມີເຊື້ອຟູໃນງານສະຫລອງກູ້ຊາດ)

12:4 ບັດ ເຮໂຣດ ສັ່ງຈັບ ເປໂຕ ແລ້ວ ຈັ່ງໃຫ້ຄຸມຂັງໄວ້ໃນຄຸກ ແລ້ວໄດ້ມອບໄວ້ກັບ
ກຸ່ມທະຫານສີ່ກຸ່ມໃຫ້ເຝົ້າໄວ້ ຕັ້ງໃຈວ່າບັດໝົດງານເທດສະການສະຫລອງການກູ້
ຊາດແລ້ວ ຊິອອກມາມອບໄວ້ໃນມືຂອງປະຊາຊົນ
12:5 ຈັ່ງຊັ້ນ ເປໂຕ ເລີຍຖືກຄຸມຂັງໄວ້ໃນຄຸກຢ່າງດີ ແຕ່ວ່າກຸ່ມຜູ້ເຊື່ອໄດ້ອະທິຖານ
ວອນຂໍຕໍ່ພຣະເຈົ້າເພື່ອ ເປໂຕ
12:6 ແຕ່ ເປໂຕ ນອນຫລັບຢູ່ໃນຄືນກ່ອນທີ່ ເຮໂຣດ ຊິເອີາເຂົາອອກມານັ້ນ ໄດ້
ນອນຢູ່ລະຫວ່າງທະຫານສອງຄົນ ມີໂສ້ສອງເສັ້ນລ່າມໄວ້ ກັບມີຍາມເຝົ້າຢູ່ໜ້າ
ປະຕູຄຸກນຳ
12:7 ແລ້ວນີ້ແຫລະ ມີເທວະທູດຂອງພຣະຜູ້ເປັນເຈົ້າມາປາກົດ ກັບມີແສງສະ-
ຫວ່າງສ່ອງເຂົ້າມາໃນຄຸກ ເທວະທູດອົງນັ້ນຈັ່ງຕົບທີ່ສີຂ້າງ ເປໂຕ ປຸກໃຫ້ຕື່ນແລ້ວ
ວ່າ “ໃຫ້ລຸກຂຶ້ນໄວໆ ເດີ້” ແລ້ວໂສ້ນັ້ນກໍເລີຍຫລຸດຕົກອອກຈາກມືຂອງ ລາວ
12:8 ແລ້ວເທວະທູດອົງນັ້ນຈັ່ງສັ່ງ ເປໂຕ ວ່າ “ໃຫ້ກຽມໂຕຄາດແອວໄວ້ກັບໃສ່ເກີບ
ເດີ້” ເປໂຕ ກໍເລີຍເຮັດຕາມ ແລ້ວເທວະທູດຈັ່ງສັ່ງ ເປໂຕ ວ່າ “ໃຫ້ໃສ່ເສື້ອນອກ
ແລ້ວຕາມເຮົາມາເດີ້”
12:9 ເປໂຕ ຈັ່ງຕາມເທວະທູດອອກໄປ ແຕ່ຍັງບໍ່ຮູ້ວ່າການທີ່ເທວະທູດເຮັດນັ້ນ
ເປັນຄວາມຈິງ ຄຶດວ່າເຈົ້າຂອງພວມຝັນຊື່ໆ
12:10 ບັດອອກໄປພົ້ນກຸ່ມທະຫານຍາມດ່ານທີ່ໜຶ່ງກັບທີ່ສອງແລ້ວ ກໍມາເຖິງປະຕູ
ເຫລັກເປັນທາງເຂົ້າໄປໃນເມືອງ ປະຕູນັ້ນກໍເລີຍເປີດເອີາເອງໃຫ້ເຂົາທັງສອງ
ຜ່ານ ເຂົາຈັ່ງຍ່າງອອກໄປຜ່ານຫົນທາງເສັ້ນໜຶ່ງ ແລ້ວໃນຫວ່າງນັ້ນພໍດີ ເທວະ-
ທູດໄດ້ຈາກ ລາວ ໄປ
12:11 ບັດ ເປໂຕ ຮູ້ເມື່ອໂຕແລ້ວ ລາວ ຈັ່ງເວົ້າວ່າ “ບັດນີ້ຜູ້ຂ້າຮູ້ແນ່ແລ້ວວ່າ ພຣະຜູ້-
ເປັນເຈົ້າໄດ້ໃຊ້ເທວະທູດຂອງເພິ່ນມາຊ່ອຍຜູ້ຂ້າໃຫ້ລອດພົ້ນຈາກມືຂອງ ເຮ-
ໂຣດ ກັບຈາກການມຸ້ງຮ້າຍຂອງພວກຢິວນຳ”
12:12 ບັດ ເປໂຕ ໄດ້ພິຈາລະນາເຫດການນັ້ນແລ້ວ ລາວ ໄດ້ຄຶດຊິໄປເຮືອນຂອງ
ມາຣີອາ ຜູ້ເປັນແມ່ຂອງ ໂຢຮັນ ຜູ້ມີຊື່ອີກວ່າ ມາຣະໂກ ໝ້ອງນັ້ນມີພີ່ນ້ອງຫລາຍ
ຄົນໂຮມກັນອະທິຖານວອນຂໍຢູ່

12:13 ບັດ ເປໂຕ ເຄາະປະຕູຮົ້ວ ມີຍິງສາວຄົນໜຶ່ງຊື່ ໂຣດາ ໄດ້ມາເພື່ອຊິເປີດປະ-
ຕູ
12:14 ພໍນາງຈຳສຽງຂອງ ເປໂຕ ໄດ້ ນາງບໍ່ໄດ້ເປີດປະຕູໃຫ້ຍ້ອນດີໃຈແຮງ ແຕ່ໄດ້
ແລ່ນເຂົ້າໄປບອກພີ່ນ້ອງວ່າ ເປໂຕ ຢືນຢູ່ໜ້າປະຕູແລ້ວ
12:15 ແຕ່ພວກຄົນຢູ່ຫັ້ນຈັ່ງເວົ້າກັບນາງວ່າ “ເຈົ້າເປັນບ້າແລ້ວ” ແຕ່ນາງໄດ້ຢືນຢັນ
ວ່າມີອີຫລີ ພວກເຂົາຈັ່ງວ່າ “ບໍ່ແມ່ນເທວະທູດຂອງເຂົາບໍ້”
12:16 ສ່ວນ ເປໂຕ ກໍຍັງຢືນເຄາະປະຕູຢູ່ ບັດຄົນອອກໄປເປີດປະຕູໄດ້ເຫັນໂຕຈິງ
ພວກເຂົາກໍເປັນຕາງຶດຫລາຍ
12:17 ແຕ່ ເປໂຕ ແກວງມືໃຫ້ເຂົາມິດລົງ ຈັ່ງເວົ້າເລື່ອງໃຫ້ພວກເຂົາຟັງວ່າ ພຣະຜູ້-
ເປັນເຈົ້າໄດ້ໃຊ້ເທວະທູດນຳເຂົາອອກຈາກຄຸກແນວໃດ ແລ້ວເທວະທູດໄດ້ສັ່ງໃຫ້
ເຂົາໄປບອກເລື່ອງນີ້ໃຫ້ ຢາໂກໂບ ກັບພວກພີ່ນ້ອງໃຫ້ຮູ້ຈັກນຳ ແລ້ວເທວະທູດ
ຈັ່ງອອກໄປໜ້ອງອື່ນ
12:18 ບັດມາຮອດແຈ້ງແລ້ວ ພວກກຸ່ມທະຫານກໍເກີດວຸ້ນວາຍບໍ່ແມ່ນນ້ອຍ ທີ່ວ່າ
ເປໂຕ ໄປຢູ່ໃສ
12:19 ແລ້ວບັດ ເຮໂຣດ ຊອກຫາໂຕ ເປໂຕ ບໍ່ພໍ້ ຈັ່ງສອບສວນພວກທະຫານຍາມ
ກັບສັ່ງໃຫ້ປະຫານພວກເຂົາເສຍ ແລ້ວ ເຮໂຣດ ໄດ້ອອກຈາກແຄວັນ ຢູດາຍ ລົງ
ໄປພັກຢູ່ເມືອງ ກາຍຊາເຣຍ
12:20 ຄື ເຮໂຣດ ບໍ່ພໍໃຈຫລາຍຕໍ່ຊາວເມືອງ ຕີເຣ ກັບຊາວເມືອງ ຊີໂດນ ແຕ່ພວກ
ຊາວເມືອງນັ້ນໄດ້ພາກັນມາເຝົ້າ ເຮໂຣດ ຄືພວກເຂົາໄດ້ເຮັດເປັນໝູ່ກັນກັບກົມ-
ມະວັງຂອງກະສັດຊື່ວ່າ ບະລາຊະໂຕ ກໍເລີຍຂໍຄືນດີກັນກັບ ເຮໂຣດ ຍ້ອນວ່າ
ເມືອງພວກເຂົາຕ້ອງຂຶ້ນອາໄສຢູ່ກັບດິນແດນຂອງກະສັດ ເຮໂຣດ ເພື່ອອາຫານ
ການກິນ
12:21 ບັດຮອດມື້ທີ່ນັດໄວ້ ເຮໂຣດ ໄດ້ນຸ່ງເຄື່ອງກະສັດ ນັ່ງບັນລັງ ແລ້ວໄດ້ກ່າວ
ປະກາດໃຫ້ປະຊາຊົນຟັງ
12:22 ແລ້ວປະຊາຊົນຈັ່ງພ້ອມກັນຮ້ອງວ່າ “ນີ້ເປັນສຽງຂອງພຣະເຈົ້າອົງໜຶ່ງ ບໍ່
ແມ່ນສຽງຄົນ”

12:23 ແລ້ວໃນຫວ່າງນັ້ນພໍດີ ເທວະທູດຂອງພຣະຜູ້ເປັນເຈົ້າເຮັດໃຫ້ ເຮໂຣດ ເກີດ
ເປັນພະຍາດຮ້າຍແຮງ ຍ້ອນເພິ່ນບໍ່ໄດ້ຖວາຍກຽດພຣະເຈົ້າ ເລີຍມີໜອນກັດກິນ
ໄຕ ເຮໂຣດ ເຖິງຕາຍ
12:24 ແຕ່ ພຣະຄຳ ຂອງພຣະເຈົ້າກໍຍັງແຜ່ອອກໄປຈະເລີນຂຶ້ນຫລາຍ
12:25 ຝ່າຍ ບາຣະນາບາ ກັບ ໂຊໂລ ບັດໄດ້ເຮັດການງານຂອງພຣະເຈົ້າສຳເລັດ
ແລ້ວ ກໍເລີຍກັບໄປເມືອງ ເຢຣູຊາເລັມ ແລ້ວຈັ່ງພາ ໂຢຮັນ ຜູ້ມີຊື່ອີກວ່າ ມາຣະ-
ໂກ ໄປນຳ

## ກິດຈະການ ບົດທີ 13

13:1 ບັດນີ້ ໃນກຸ່ມຜູ້ເຊື່ອໃນເມືອງ ອັນຕິໂອເຂຍ ມີຜູ້ເປັນປາກເປັນສຽງກັບຜູ້ສອນ
ຜູ້ລາງຄົນ ຄື ບາຣະນາບາ ກັບ ຊີເມໂອນ ທີ່ເອີ້ນວ່າ ນີເກີ ກັບ ລູກີໂອ ຊາວເມືອງ
ກີເຣເນ ກັບມານາເອນຜູ້ທີ່ໃຫຍ່ໂຕຂຶ້ນມານຳກັນກັບເຈົ້າເມືອງ ເຮໂຣດ ກັບ ໂຊ-
ໂລ
13:2 ບັດຄົນໝູ່ນັ້ນພວມຮັບໃຊ້ພຣະຜູ້ເປັນເຈົ້າ ກັບຖືສິນອົດເຂົ້າຢູ່ ພຣະວິນຍານ
ໄດ້ເວົ້າກັບເຂົາວ່າ “ໃຫ້ເອົາ ບາຣະນາບາ ກັບ ໂຊໂລ ອອກໄວ້ເພື່ອການງານແນວ
ທີ່ເຮົາໄດ້ເອີ້ນໄດ້ເລືອກເຂົາ”
13:3 ຫລັງຈາກອົດເຂົ້າກັບອະທິຖານຈົບແລ້ວ ໝູ່ພວກເຂົາກໍໄດ້ວາງມືໃສ່ ບາຣະ-
ນາບາ ກັບ ໂຊໂລ ແລ້ວໄດ້ໃຊ້ເຂົາອອກໄປ
13:4 ແລ້ວໂດຍການນຳພາຂອງ ພຣະວິນຍານ ເຂົາທັງສອງໄດ້ລົງໄປເມືອງ ເຊລູ-
ເກຍ ແລ້ວຈັ່ງແລ່ນເຮືອໃບຈາກນັ້ນໄປເກາະ ກຸບໂຣ
13:5 ບັດຮອດເມືອງ ຊາລາມີ ແລ້ວ ພວກເຂົາໄດ້ປະກາດ ພຣະຄຳ ຂອງພຣະເຈົ້າ
ໃນສາລາທຳຂອງພວກຢິວ ແລ້ວ ໂຢຮັນ-ມາຣະໂກ ໄດ້ໄປນຳ ເປັນຜູ້ຊ່ອຍເຂົາ
13:6 ບັດໄດ້ເລາະໄປທົ່ວເກາະແລ້ວ ເຂົາຈັ່ງໄປຍັງເມືອງ ປາໂຟ ໃນເມືອງນັ້ນເຂົາ
ໄດ້ຮັບຄົນໜຶ່ງທີ່ເປັນພໍ່ມົດໝໍຜີ ກັບເປັນຜູ້ພະຍາກອນບໍ່ຈິງ ຊຶ່ງເປັນຄົນ ຢິວ ຊື່
ບາຣະ-ເຢຊູ

13:7 ຄົນຜູ້ນີ້ຢູ່ກັບຜູ້ວ່າລາຊະການເມືອງຊື່ວ່າ ເຊຄີໂອ ໂປໂລ ຜູ້ນີ້ເປັນຄົນສະ-
ຫລາດອ້ອມຄອບ ຈັ່ງໄດ້ເຊີນ ບາຣະນາບາ ກັບ ໂຊໂລ ມາ ຕ້ອງການຢາກຟັງ
ພຣະຄຳ ຂອງພຣະເຈົ້າ
13:8 ແຕ່ ເອລີມາ ຜູ້ເປັນພໍ່ມົດໝໍຜີ (ຊື່ຈິງແປວ່າຈັ່ງຊັ້ນ) ໄດ້ຕໍ່ຕ້ານ ບາຣະນາບາ
ກັບ ໂຊໂລ ຍ້ອນບໍ່ຢາກໃຫ້ຜູ້ວ່າເຊື່ອ
13:9 ບັດນີ້ ໂຊໂລ (ທີ່ຊື່ວ່າ ໂປໂລ ) ຊຶ່ງປະກອບດ້ວຍ ພຣະວິນຍານ ໄດ້ເພ່ງຕາ
ຈ້ອງໃສ່ ເອລີມາ
13:10 ແລ້ວເວົ້າວ່າ “ໂອ ເຈົ້າຜູ້ເຕັມໄປດ້ວຍກົນອຸບາຍກັບເລ້ຫລ່ຽມອັນຮ້າຍກາດຄູ່
ຢ່າງ ເຈົ້າຜູ້ເປັນລູກຂອງ ພະຍາມານ ແທ້ໆ ເປັນສັດຕູ ຕໍ່ຕ້ານທາງຊອບທຳຄູ່
ແນວ ມື້ໃດເຈົ້າຊິເຊົາບິດເບືອນທາງຊື່ກົງຂອງພຣະຜູ້ເປັນເຈົ້າ
13:11 ແລ້ວບັດນີ້ ນີ້ແຫລະ ມືຂອງພຣະຜູ້ເປັນເຈົ້າໄດ້ຈັບບາຍເຈົ້າ ແຕ່ນີ້ໄປເຈົ້າຊິ
ຕາບອດບໍ່ເຫັນຮຸ່ງເລີຍ ຈົນຮອດຍາມເວລາທີ່ກຳນົດໄວ້” ແລ້ວໃນຫວ່າງນັ້ນພໍດີ
ມີເງົາມືດປົກຄຸມ ເອລີມາ ໄວ້ ເຂົາຈັ່ງງົມຊາວໄປຊາວມາຫາຄົນຈູງມືເຂົາ
13:12 ບັດຜູ້ວ່າໄດ້ເຫັນເຫດການທີ່ເກີດຂຶ້ນນັ້ນ ຈັ່ງຮັບເຊື່ອຢູ່ກັບໝ້ອງ ສັງເກດໃຈ
ໃນຫລັກຄຳສອນຂອງພຣະຜູ້ເປັນເຈົ້າ
13:13 ແລ້ວບັດນີ້ ໂປໂລ ກັບໝູ່ພວກຂອງເຂົາກໍໄດ້ລົງເຮືອແລ່ນອອກຈາກເມືອງ
ປາໂຟ ໄປຍັງເມືອງ ເປເຄ ໃນແຄວ້ນ ປຳຟີເລຍ ແລ້ວສ່ວນ ໂຢຮັນ ນັ້ນກໍໄດ້ແຍກ
ຈາກໝູ່ພວກ ຫລົບເມືອເມືອງ ເຢຣູຊາເລັມ
13:14 ແຕ່ບັດພວກນັ້ນເດີນທາງຈາກເມືອງ ເປເຄ ໄປແລ້ວ ໄດ້ໄປຮອດເມືອງ ອັນ-
ຕີໂອເຂຍ ໃນແຄວ້ນ ປີສີເດຍ ພວກເຂົາໄດ້ເຂົ້າໄປນັ່ງລົງໃນສາລາທຳ ເປັນມື້ຢຸດ
ພັກວັນຊະບາໂຕ
13:15 ແລ້ວບັດອ່ານກົດບັນຍັດຂອງ ໂມເຊ ກັບຄຳຂອງຜູ້ເປັນປາກເປັນສຽງຂອງ
ພຣະເຈົ້າແລ້ວ ຄະນະບໍລິຫານຂອງສາລາທຳຈັ່ງໃຊ້ຄົນໄປເຊີນ ໂປໂລ ກັບ ບາ-
ຣະນາບາ ວ່າ “ທ່ານພີ່ນ້ອງເອີຍ ຄັ່ນທ່ານມີຄຳໜຸນນ້ຳໃຈພີ່ນ້ອງຄົນຢູ່ນີ້ ກໍເຊີນ
ແບ່ງປັນໃຫ້ເຖີ”

13:16 ບັດນີ້ ໂປໂລ ຈັ່ງຢືນຂຶ້ນ ແກວ່ງມືແລ້ວຕັ້ງຕົ້ນເວົ້າວ່າ “ທ່ານຜູ້ທີ່ເປັນຊົນຊາດ
ອິສະຣາເອນ ກັບເຈົ້າທັງຫລາຍຜູ້ທີ່ເຄົາລົບພຣະເຈົ້າ ກະລຸນາຟັງເອົາເຖີ
13:17 ຄື ພຣະເຈົ້າຂອງຊົນຊາດ ອິສະຣາເອນ ນີ້ ໄດ້ເລືອກພວກພໍ່ຕະກູນຂອງພວກ
ເຮົາໄວ້ ກັບໄດ້ອວຍພອນເຂົາໃຫ້ຈະເລີນແມ່ນແຕ່ຕອນຍັງເປັນຄົນຕ່າງແດນໃນ
ປະເທດ ເອຢິບ ແລ້ວເພິ່ນຈັ່ງໄດ້ນຳໜ້າເຂົາອອກມາຈາກປະເທດນັ້ນໂດຍມືຂອງ
ເພິ່ນທີ່ປະກອບດ້ວຍລິດກຳລັງ
13:18 ແລ້ວເພິ່ນໄດ້ທົນເອົາຕໍ່ພຶດຕິກຳອັນບໍ່ດີຂອງເຂົາ ໃນຖິ່ນແຫ້ງແລ້ງເປັນເວລາ
ປະມານສີ່ສິບປີ
13:19 ແລ້ວບັດເພິ່ນໄດ້ກວາດລ້າງຄົນເຈັດຊົນຊາດອອກຈາກດິນແດນ ການາ-
ອານ ແລ້ວ ເພິ່ນໄດ້ແບ່ງປັນດິນແດນນັ້ນໃຫ້ພວກເຂົາໂດຍການຍົກໃຫ້ເປັນມໍ-
ລະດົກ
13:20 ຢູ່ມາ ພຣະເຈົ້າໄດ້ໃຫ້ພວກເຂົາມີພວກ ພວກຜູ້ປົກຄອງ ເປັນຍາມເວລາປະ-
ມານ ສີ່ຮ້ອຍຫ້າສິບປີ ຈົນຮອດສະໄໝທີ່ ຊາມູເອນ ໄດ້ເປັນຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າ
13:21 ຫລັງຈາກນັ້ນມາ ພວກເຂົາຄຶດຢາກໄດ້ກະສັດ ພຣະເຈົ້າກໍເລີຍໃຫ້ ຊາອຸນ
ລູກຊາຍຂອງ ກີເຊ ຈາກເຜົ່າ ເບັນຢາມິນ ໃຫ້ເປັນກະສັດຄົບສີ່ສິບປີ
13:22 ບັດປົດ ຊາອຸນ ອອກແລ້ວ ພຣະເຈົ້າໄດ້ຕັ້ງ ດາວິດ ຂຶ້ນເປັນກະສັດຂອງ
ພວກເຂົາ ຊຶ່ງພຣະເຈົ້າອອກຄຳພະຍານເຖິງ ດາວິດ ວ່າ ‘ເຮົາໄດ້ຮັບ ດາວິດ ລູກ-
ຊາຍຂອງ ເຢຊາຍ ເປັນຄົນທີ່ຊິເຮັດຕາມໃຈມັກຂອງເຮົາ ແລ້ວເຮັດຕາມຈຸດປະ-
ສົງຂອງເຮົາໃຫ້ໝົດ’
13:23 ແລ້ວຈາກເຊື້ອສາຍຂອງ ດາວິດ ນີ້ເອງ ພຣະເຈົ້າໄດ້ໂຜດໃຫ້ພຣະຜູ້ໂຜດ
ຂອງຊົນຊາດ ອິສະຣາເອນ ເກີດມາ ຊຶ່ງເປັນໄປຕາມຄຳໝັ້ນສັນຍາຂອງເພິ່ນ
ແມ່ນ ພຣະເຢຊູຄຣິດ ນີ້ເອງ
13:24 ແລ້ວກ່ອນທີ່ເພິ່ນມານັ້ນ ໂຢຮັນ ໄດ້ຕັ້ງຕົ້ນປະກາດໃຫ້ປະຊາຊົນ ອິສະຣາ-
ເອນ ທັງໝົດ ຮັບຈຸ່ມນ້ຳສະແດງການກັບໃຈໃໝ່

13:25 ແລ້ວບັດ ໂຢຮັນ ໃກ້ຊິແລ້ວການງານຂອງ ລາວ ລາວ ຈັ່ງຖາມຄົນວ່າ 'ພວກ
ເຈົ້າຄຶດວ່າຂ້ອຍນີ້ແມ່ນຜູ້ໃດ ຂ້ອຍບໍ່ແມ່ນເພິ່ນຜູ້ນັ້ນດອກ ແຕ່ນີ້ແຫລະ ຊິມີເພິ່ນຜູ້
ໜຶ່ງມາຕອນຫລັງຂ້ອຍ ຊຶ່ງໂຕຂ້ອຍເອງດີບໍ່ພໍທີ່ຊິແກ້ສາຍເກີບໃຫ້ເພິ່ນເລີຍ'
13:26 ພີ່ນ້ອງທັງຫລາຍ ເອີຍ ຜູ້ເປັນລູກຫລານຕາມເຊື້ອສາຍຂອງພໍ່ ອັບຣາຮາມ
ພ້ອມກັບຜູ້ໃດໃນພວກເຈົ້າທີ່ເຄົາລົບພຣະເຈົ້າ ຂ່າວດີເລື່ອງຄວາມລອດພົ້ນນີ້ໄດ້
ສົ່ງມາຍັງພວກເຈົ້າແລ້ວ
13:27 ຄືຝ່າຍຊາວເມືອງ ເຢຣູຊາເລັມ ກັບຄະນະຜູ້ນຳຂອງເຂົານັ້ນ ເນື່ອງຈາກວ່າ
ເຂົາບໍ່ໄດ້ຮູ້ຈັກກັບພຣະເຈົ້າ ກັບບໍ່ເຂົ້າໃຈຄຳພະຍາກອນຂອງພວກຜູ້ເປັນປາກ-
ເປັນສຽງຂອງເພິ່ນນັ້ນ ຊຶ່ງເຂົາເຄີຍອ່ານກັນໃນຄູ່ມື້ຢຸດພັກວັນຊະບາໂຕ ພວກນີ້
ຈັ່ງໄດ້ເຮັດໃຫ້ຄຳພະຍາກອນນັ້ນສຳເລັດ ໂດຍໄດ້ລົງໂທດເພິ່ນຈັ່ງຮອດຂ້າເລີຍ
13:28 ເຖິງແມ່ນວ່າເຂົາບໍ່ໄດ້ເຫັນຄວາມຜິດແນວໃດໃນເພິ່ນທີ່ສົມຄວນຊິປະຫານ
ໃຫ້ຕາຍ ພວກເຂົາກໍຍັງຂໍຮ້ອງ ປີລາດ ໃຫ້ຄຶງປະຫານເພິ່ນ
13:29 ແລ້ວບັດເຂົາເຮັດຕາມຄຳພະຍາກອນນັ້ນຈົນສຳເລັດໝົດຕາມທີ່ມີຂຽນໄວ້
ເລື່ອງເພິ່ນ ເຂົາຈັ່ງເອົາສົບຂອງເພິ່ນລົງຈາກຫລັກໄມ້ໄປມ້ຽນໄວ້ໃນອຸບໂມງ
13:30 ແຕ່ວ່າພຣະເຈົ້າໄດ້ໂຜດໃຫ້ເພິ່ນເປັນຂຶ້ນມາຈາກຕາຍ
13:31 ແລ້ວມີຄົນຫລວງຫລາຍໄດ້ຮັບໄດ້ເຫັນເພິ່ນເປັນເວລາຫລາຍມື້ ຈາກແຄວ້ນ
ກາລິເລ ໄປຮອດເມືອງ ເຢຣູຊາເລັມ ຊຶ່ງບັດນີ້ຄົນໝູ່ນັ້ນໄດ້ເປັນຫຼັກຖານພະຍານ
ຢືນຢັນ ເຖິງຄວາມຈິງເລື່ອງເພິ່ນເພື່ອຄົນທັງຫລາຍ
13:32 ແລ້ວບັດນີ້ ພວກເຮົາຈັ່ງປ່າວປະກາດເລື່ອງຂ່າວປະເສີດນີ້ໃຫ້ພວກເຈົ້າ ຊຶ່ງ
ເປັນຕາມຄຳໝັ້ນສັນຍາທີ່ພຣະເຈົ້າໃຫ້ໄວ້ກັບພວກພໍ່ຕະກູນຂອງເຮົານັ້ນ
13:33 ພຣະເຈົ້າໄດ້ເຮັດໃຫ້ຄຳທຳນາຍນັ້ນສຳເລັດແລ້ວ ໃຫ້ພວກເຮົາຜູ້ເປັນລູກ-
ຫລານຂອງຄົນໝູ່ນັ້ນ ໂດຍວ່າເພິ່ນໄດ້ໂຜດໃຫ້ ພຣະເຢຊູ ເປັນຂຶ້ນມາຈາກຕາຍ
ແລ້ວ ຄືກັນກັບທີ່ມີຄຳທຳນາຍຂຽນໄວ້ໃນໜັງສື ເພງສັນລະເສີນ ບົດທີສອງວ່າ
'ເຈົ້າເປັນບຸດໂທນຂອງເຮົາ ແມ່ນມື້ນີ້ເນາະເຮົາຊິໃຫ້ການເກີດໃຫ້ເຈົ້າ'

13:34 ການທີ່ພຣະເຈົ້າໄດ້ໃຫ້ ພຣະເຢຊູ ເປັນຂຶ້ນມາຈາກຕາຍນັ້ນ ຈັ່ງບໍ່ມີການກັບ
ໄປສູ່ແດນເປື່ອຍເນົ່າອີກເລີຍ ພຣະເຈົ້າຈັ່ງສັນຍາໄວ້ຢ່າງແນ່ນອນອີກວ່າ 'ເຮົາຊິ
ເມດຕາເຈົ້າຕາມທີ່ເຮົາໄດ້ສັນຍາໄວ້ກັບ ດາວິດ ນັ້ນ'
13:35 ແລ້ວເພິ່ນໄດ້ລົງໄວ້ໃນ ເພງສັນລະເສີນ ອີກບົດໜຶ່ງວ່າ 'ພຣະເຈົ້າຊິບໍ່ຍອມ
ໃຫ້ອົງບໍລິສຸດຂອງເພິ່ນເຫັນການເປື່ອຍເນົ່າເລີຍ'
13:36 ໂດຍວ່າ ສ່ວນກະສັດ ດາວິດ ນັ້ນ ຫລັງຈາກ ລາວ ປະຕິບັດໜ້າທີ່ໃນການ
ປົກຄອງຊົນຊາດຂອງ ລາວ ຕາມພຣະປະສົງຂອງພຣະເຈົ້າ ແລ້ວລາວກໍລ່ວງ
ຫລັບໄປ ໄດ້ຖືກມ້ຽນໄວ້ກັບພວກພໍ່ຕະກູນຂອງ ລາວ ແລ້ວໄດ້ເຂົ້າສູ່ການເປື່ອຍ-
ເນົ່າ
13:37 ແຕ່ວ່າ ເພິ່ນຜູ້ທີ່ພຣະເຈົ້າໄດ້ກະລຸນາໃຫ້ເປັນຂຶ້ນມາຈາກຕາຍນັ້ນ ບໍ່ໄດ້ຮັບ
ໄດ້ເຫັນການເປື່ອຍເນົ່າເລີຍ
13:38 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ຂໍໃຫ້ເຂົ້າໃຈວ່າ ໂດຍທາງຜູ້ຊາຍຜູ້ນີ້ເອງ
ພວກເຮົາໄດ້ປະກາດການໃຫ້ອະໄພຍົກໂທດບາບໃຫ້ພວກເຈົ້າຟັງ
13:39 ແລ້ວໂດຍເພິ່ນຜູ້ນັ້ນ ຄູ່ຄົນທີ່ຮັບເຊື່ອຊິພົ້ນໂທດຈາກຄູ່ຢ່າງ ຈັ່ງໄດ້ເປັນຜູ້
ຊອບທຳຕໍ່ໜ້າພຣະເຈົ້າໄດ້ ຊຶ່ງພວກເຈົ້າບໍ່ສາມາດເປັນຜູ້ຊອບທຳໄດ້ໂດຍທາງ
ກົດບັນຍັດຂອງ ໂມເຊ ນັ້ນ
13:40 ຈັ່ງຊັ້ນ ລະວັງໃຫ້ດີເດີ້ ຢ້ານວ່າເຫດຮ້າຍທີ່ພວກຜູ້ເປັນປາກເປັນສຽງໄດ້ກ່າວ
ເຖິງນັ້ນຊິຕົກໃສ່ພວກເຈົ້າ
13:41 ທີ່ວ່າ 'ນີ້ແຫລະ ເຈົ້າຜູ້ທີ່ມັກລົບຫລູ່ໝິ່ນປະມາດ ໃຫ້ແປກໃຈແລ້ວຕົກສູ່
ຄວາມພິນາດເດີ້ ຄືວ່າ ເຮົາພວມເຮັດເຫດການໃຫຍ່ແນວໜຶ່ງໃນຍຸກສະໄໝຂອງ
ເຈົ້າ ເປັນເຫດການທີ່ວ່າ ແມ່ນແຕ່ຊິມີຄົນມາປ່າວປະກາດໃຫ້ແລ້ວ ພວກເຈົ້າຊິບໍ່-
ຍອມເຊື່ອເລີຍ'"
13:42 ບັດພວກຢິວໄດ້ອອກໄປຈາກສາລາທຳແລ້ວ ພວກຄົນຕ່າງຊາດຢູ່ຫັ້ນກໍ
ອ້ອນວອນຢາກໃຫ້ປະກາດຖ້ອຍຄຳນັ້ນໃຫ້ເຂົາຟັງອີກ ໃນມື້ຢຸດພັກວັນຊະບາໂຕ
ອາທິດໜ້າ

13:43 ບັດການປະຊຸມເລີກແລ້ວ ພວກຢິວຫລາຍຄົນພ້ອມກັບຄົນອື່ນໆ ທີ່ເຂົ້າ
ຄວາມເຊື່ອນຳຄົນ ຢິວ ຊຶ່ງເຄົາລົບພຣະເຈົ້າໄດ້ຕິດຕາມ ໂປໂລ ກັບ ບາຣະນາບາ
ອອກໄປ ເຂົາທັງສອງຈັ່ງໜຸນນ້ຳໃຈຊວນໝູ່ພວກເຂົາໃຫ້ຕັ້ງໝັ້ນຢູ່ໃນພຣະກະລຸ-
ນາທິຄຸນຂອງພຣະເຈົ້າຕໍ່ໆ ໄປ
13:44 ບັດມື້ຢຸດພັກວັນຊະບາໂຕອາທິດໜ້າມາຮອດແລ້ວ ຄົນເກືອບໝົດເມືອງໄດ້
ອອກມາຕຸ້ມໂຮມກັນ ເພື່ອຮັບຟັງ ພຣະຄຳ ຂອງພຣະເຈົ້າ
13:45 ແຕ່ບັດພວກຢິວເຫັນຄົນຫລວງຫລາຍນັ້ນ ກໍເກີດເຕັມໄປດ້ວຍຄວາມອິດ-
ສາບັງບຽດ ໄດ້ເວົ້າຄັດຄ້ານຖ້ອຍຄຳຂອງ ໂປໂລ ຮອດການໂຕ້ຖຽງກັບການສົບ-
ປະໝາດນຳ
13:46 ແລ້ວ ໂປໂລ ກັບ ບາຣະນາບາ ເກີດມີໃຈກ້າຂຶ້ນມາໄດ້ເວົ້າວ່າ "ຈຳເປັນແລ້ວ
ທີ່ຊິຕ້ອງປ່າວປະກາດ ພຣະຄຳ ຂອງພຣະເຈົ້ານີ້ໃຫ້ພວກຢິວເຈົ້າຟັງກ່ອນ ແຕ່ໃນ
ກໍລະນີທີ່ພວກເຈົ້າປັດອອກບໍ່ຍອມຟັງ ຈັ່ງໄດ້ຕັດສິນວ່າໂຕເອງບໍ່ສົມຄວນທີ່ຊິໄດ້
ຊີວິດອັນຕະຫລອດໄປເປັນນິດເລີຍ ນີ້ແຫລະ ບັດນີ້ພວກເຮົາຊິມຸ້ງໜ້າອອກໄປ
ຫາຄົນຕ່າງຊາດເປັນການດີກວ່າ
13:47 ຄືພຣະຜູ້ເປັນເຈົ້າເອງໄດ້ສັ່ງເຮົາໄວ້ຈັ່ງຊີ້ແລ້ວວ່າ 'ເຮົາໄດ້ຕັ້ງເຈົ້າໄວ້ ໃຫ້ເປັນ
ແສງສະຫວ່າງໃຫ້ຄົນຕ່າງຊາດ ເພື່ອເຈົ້າຊິເປັນເຫດໃຫ້ຄົນທັງຫລາຍໄດ້ຄວາມ-
ລອດພົ້ນຮອດສຸດປາຍແຜ່ນດິນໂລກ'"
13:48 ແລ້ວບັດຄົນຕ່າງຊາດໄດ້ຍິນຈັ່ງຊັ້ນ ກໍເກີດມີຄວາມຍິນດີຢ່າງໃຫຍ່ ຈັ່ງໄດ້
ຍົກຍ້ອງສັນລະເສີນ ພຣະຄຳ ຂອງພຣະຜູ້ເປັນເຈົ້າ ແລ້ວຄົນທັງຫລາຍທີ່ເຫັນດີ
ເຫັນຊອບທີ່ຊິເລືອກຮັບເອົາຊີວິດອັນຕະຫລອດໄປເປັນນິດ ກໍໄດ້ເຊື່ອ
13:49 ແລ້ວ ພຣະຄຳ ຂອງພຣະຜູ້ເປັນເຈົ້າໄດ້ແຜ່ອອກໄປຕະຫລອດຮອດທົ່ວໝົດ
ເຂດແດນນັ້ນ
13:50 ແຕ່ພວກຢິວຢູ່ຫັ້ນໄດ້ປຸກລະດົມຍຸຍົງພວກແມ່ຍິງສູງສັກຂອງເມືອງ ທີ່ນັບຖື
ພຣະເຈົ້າ ພ້ອມກັບພວກຜູ້ຊາຍທີ່ເປັນຜູ້ຫລັກຜູ້ໃຫຍ່ໃນເມືອງນັ້ນ ພວກເຂົາຈັ່ງ-
ໄດ້ຊຸກຍູ້ໄລ່ ໂປໂລ ກັບ ບາຣະນາບາ ອອກຈາກເຂດເມືອງຂອງເຂົາ

13:51 ຝ່າຍ ໂປໂລ ກັບ ບາຣະນາບາ ຈັ່ງປັດຝຸ່ນອອກຈາກເກີບຂອງເຂົາເພື່ອສະ-
ແດງການປະທ້ວງ ແລ້ວກໍໄປທາງເຂດເມືອງ ອີໂກນີອົນ
13:52 ຝ່າຍພວກລູກສິດນັ້ນກໍເຕັມໄປດ້ວຍຄວາມດີອົກດີໃຈ ແລ້ວປະກອບດ້ວຍ
ພຣະວິນຍານ ນໍາ

# ກິດຈະການ ບົດທີ 14

14:1 ບັດນີ້ ມັນເປັນໄປທີ່ວ່າ ໃນເມືອງ ອີໂກນີອົນ ໂປໂລ ກັບ ບາຣະນາບາ ໄດ້
ເຂົ້າໄປໃນສາລາທໍາຂອງພວກຢິວ ແລ້ວຈັ່ງປະກາດຕາມທີ່ເຄີຍ ເຖິງມີຄົນ
ຫລວງຫລາຍໄດ້ຮັບເຊື່ອ ທັງພວກຢິວພ້ອມທັງພວກຄົນເກຣັກນໍາ
14:2 ແຕ່ພວກຢິວທີ່ບໍ່ເຊື່ອກໍຍຸແຫຍ່ຄົນຕ່າງຊາດໃຫ້ເກີດມີໃຈຄຶດປອງຮ້າຍຕໍ່ພວກ
ພີ່ນ້ອງ
14:3 ຝ່າຍ ໂປໂລ ກັບ ບາຣະນາບາ ກໍຢູ່ນັ້ນໂດນເຕີບ ຈັ່ງປະກາດໃນພຣະນາມ
ຂອງພຣະຜູ້ເປັນເຈົ້າໂດຍຄວາມກ້າຫານ ແລ້ວເພິ່ນໄດ້ສະໜັບສະໜູນການປະ-
ກາດເລື່ອງພຣະຄຸນຂອງເພິ່ນ ໂດຍໂຜດໃຫ້ມີເຄື່ອງ ໝາຍອັນສໍາຄັນກັບເຫດ-
ການມະຫັດສະຈັນປາກົດໂດຍມືຂອງເຂົາ
14:4 ແຕ່ໄທເມືອງນັ້ນກໍແຕກອອກເປັນສອງພັກສອງພວກ ຝ່າຍໜຶ່ງເຂົ້າຂ້າງພວກ
ຄົນ ຢິວ ກັບອີກຝ່າຍໜຶ່ງກໍເຂົ້າຂ້າງພວກທູດພິເສດນັ້ນ
14:5 ບັດນີ້ ພວກຄົນຕ່າງຊາດກັບພວກຢິວທີ່ຢູ່ຝ່າຍຕໍ່ຕ້ານ ພ້ອມທັງພວກຜູ້ຫລັກ-
ຜູ້ໃຫຍ່ຂອງຄົນ ຢິວ ນັ້ນ ໄດ້ສົມຄົບຄຶດກັນວ່າຊິໂຈມຕີເຮັດແນວທາລຸນໃສ່ ໂປໂລ
ກັບ ບາຣະນາບາ ທັງຊິແກວ່ງຫີນໃສ່ເຂົາໃຫ້ຕາຍ
14:6 ແຕ່ ໂປໂລ ກັບ ບາຣະນາບາ ໄດ້ຮູ້ໂຕກ່ອນ ຈັ່ງໜີອອກໄປປະກາດຢູ່ເມືອງ ລີ-
ຊະທາ ກັບເມືອງ ເດຣະບາ ພ້ອມທັງແຖວຊົນນະບົດທີ່ຢູ່ອ້ອມແອ້ມນັ້ນ ໃນ
ແຄວ້ນ ລີກາໂອເນຍ
14:7 ແລ້ວເຂົາກໍໄດ້ປະກາດຂ່າວປະເສີດຢູ່ນັ້ນຕໍ່ໄປ
14:8 ໃນເມືອງ ລີຊະທາ ນັ້ນມີຜູ້ຊາຍເປັນງ່ອຍຜູ້ໜຶ່ງ ໃຊ້ຕີນບໍ່ໄດ້ເລີຍຍ້ອນພິການ
ມາແຕ່ທ້ອງແມ່ ບໍ່ເຄີຍຍ່າງໄປຈັກບາດກ້າວເລີຍ

14:9 ຜູ້ຊາຍງ່ອຍຜູ້ນັ້ນໄດ້ຟັງ ໂປໂລ ເວົ້າ ໂປໂລ ຈັ່ງຈ້ອງເບິ່ງໂຕເຂົາ ສັງເກດວ່າ
ໃຈເຂົາມີຄວາມເຊື່ອຢາກເຊົາເປັນງ່ອຍນັ້ນ
14:10 ບັດນີ້ ໂປໂລ ຈັ່ງຮ້ອງສຽງດັ່ງຂຶ້ນມາສັ່ງວ່າ "ໃຫ້ເຈົ້າລຸກຂຶ້ນຢືນກົງເດີ້" ແລ້ວ
ເຂົາຈັ່ງໂດດຂຶ້ນຍ່າງເລີຍ
14:11 ແລ້ວບັດພໍພວກຄົນຢູ່ນັ້ນເຫັນແນວທີ່ ໂປໂລ ໄດ້ເຮັດ ຈັ່ງພາກັນຮ້ອງຂຶ້ນມາ
ເປັນພາສາ ລີກາໂອເນຍ ວ່າ "ພວກເທບເຈົ້າໄດ້ລົງມາແປງໂຕເປັນຄົນຢູ່ນຳເຮົາ
ແລ້ວ"
14:12 ເຂົາຈັ່ງເອີ້ນ ບາຣະນາບາ ວ່າ " ພະຊູດ " ກັບເອີ້ນ ໂປໂລ ວ່າ " ພະເຮຣະເມ "
ຍ້ອນ ໂປໂລ ເປັນຜູ້ນຳໃນການເວົ້າ
14:13 ບັດນີ້ປະໂລຫິດປະຈຳ ພະຊູດ ທີ່ມີສາລາຂອງ ພະຊຸດ ຕັ້ງຢູ່ແຖວໜ້າປະຕູ
ເມືອງ ໄດ້ຈູງງົວກັບຖືພວງມາໄລມາຍັງປະຕູເມືອງ ຕັ້ງໃຈວ່າຊິຖວາຍເຄື່ອງບູຊາ
ພ້ອມກັບປະຊາຊົນ
14:14 ແຕ່ບັດພວກທູດພິເສດ ບາຣະນາບາ ກັບ ໂປໂລ ໄດ້ຍິນຈັ່ງຊັ້ນ ເຂົາຈັ່ງຈີກ
ເສື້ອຜ້າເຈົ້າຂອງ ແລ່ນເຂົ້າໄປຫວ່າງກາງຄົນພວກນັ້ນ ແລ້ວຈັ່ງຮ້ອງອອກສຽງດັ່ງ
14:15 ວ່າ "ພວກຜູ້ຊາຍເອີຍ ເປັນຫຍັງເຈົ້າຈັ່ງເຮັດແນວນີ້ ເຮົາກໍເປັນຄົນທຳມະດາ
ຄືກັນກັບພວກເຈົ້າເດີ້ ເຮົາມາປະກາດໃຫ້ພວກເຈົ້າກັບຈາກແນວໝູ່ນີ້ທີ່ບໍ່ມີປະ-
ໂຫຍດ ໃຫ້ມາຫາພຣະເຈົ້າຜູ້ທ່ຽງແທ້ຜູ້ເພິ່ນດຳລົງຢູ່ ທີ່ເພິ່ນໄດ້ບັນດານສ້າງຟ້າ-
ສະຫວັນກັບແຜ່ນດິນໂລກ ພ້ອມທັງທະເລກັບໝົດຄູ່ອັນທີ່ມີຢູ່ໃນຫັ້ນ
14:16 ຊຶ່ງໃນສະໄໝກ່ອນໆ ເພິ່ນໄດ້ປ່ອຍພວກຄົນຕ່າງຊາດໃຫ້ໃຊ້ຊີວິດຕາມໃຈ
ມັກຂອງເຂົາ
14:17 ຈັ່ງໃດກໍຕາມ ເພິ່ນບໍ່ໄດ້ປະຖິ້ມຄົນເຮົາໄວ້ ໂດຍຂາດຫຼັກຖານພິສູດເຖິງເພິ່ນ
ຄືເພິ່ນໄດ້ເຮັດແນວດີງາມໃຫ້ຄົນເຮົາ ໂດຍໄດ້ໂຜດໃຫ້ມີຝົນຕົກຈາກທ້ອງຟ້າໃຫ້
ເກີດພືດຜົນຕາມລະດູ ເພື່ອຄົນເຮົາທັງຫລາຍຊິໄດ້ອີ່ມອົກອີ່ມໃຈດ້ວຍເຂົ້າປາ
ອາຫານ ກັບດ້ວຍຄວາມຍິນດີ"
14:18 ເຖິງແມ່ນທູດພິເສດໄດ້ເວົ້າແນວຈັ່ງຊີ້ແລ້ວ ຍັງເກືອບບໍ່ສາມາດຫ້າມປະຊາ-
ຊົນໄວ້ ບໍ່ໃຫ້ເຮັດການບູຊາຖວາຍຕໍ່ພວກ ລາວ ນັ້ນ

14:19 ແຕ່ມີພວກຢິວຜູ້ລາງຄົນທີ່ມາຈາກເມືອງ ອັນຕີໂອເຂຍ ກັບເມືອງ ອີໂກນີອົນ
ໄດ້ຊັກຊວນປະຊາຊົນຢູ່ທັ້ນໃຫ້ເອົາຫີນແກວ່ງໃສ່ ໂປໂລ ແລ້ວລາກອອກໄປຖິ້ມ
ຢູ່ນອກເມືອງ ຈັ່ງຄຶດວ່າ ລາວ ຕາຍໄປແລ້ວ
14:20 ຈັ່ງໃດກໍຕາມ ພວກລູກສິດໄດ້ຢືນອ້ອມຜູ້ໄວ້ ລາວກໍເລີຍລຸກຂຶ້ນກັບເຂົ້າໄປ
ໃນເມືອງ ບັດຮອດມື້ອື່ນມາ ລາວ ຈັ່ງອອກໄປກັບ ບາຣະນາບາ ໄປຍັງເມືອງ ເດ-
ຣະບາ
14:21 ແລ້ວບັດພວກ ລາວ ໄດ້ປະກາດຂ່າວປະເສີດໃນເມືອງ ເດຣະບາ ນັ້ນ ທັງໄດ້
ສອນຄົນຫລວງຫລາຍນຳ ຈັ່ງໄດ້ຫລົບເມືອເມືອງ ລີຊະທາ ເມືອງ ອີໂກນີອົນ ກັບ
ເມືອງ ອັນຕີໂອເຂຍ ອີກ
14:22 ແລ້ວຈັ່ງສົ່ງເສີມກຳລັງໃຈຂອງໝູ່ລູກສິດ ໜຸນນ້ຳໃຈເຂົາໃຫ້ດຳລົງຢູ່ໃນ
ຄວາມເຊື່ອຢ່າງໝັ້ນຄົງ ຈັ່ງບອກກັນໄວ້ວ່າ “ພວກຜູ້ເຊື່ອເຮົາຕ້ອງທົນຕໍ່ຄວາມ
ຍາກລຳບາກຫລາຍໃນການເຂົ້າລາຊະອານາຈັກຂອງພຣະເຈົ້າ”
14:23 ແລ້ວບັດ ໂປໂລ ກັບ ບາຣະນາບາ ໄດ້ແຕ່ງຕັ້ງໝູ່ຜູ້ເບິ່ງແຍງໄວ້ໃນກຸ່ມຜູ້ເຊື່ອ
ຢູ່ຄູ່ໝ້ອງ ກັບໄດ້ຕຸ້ມໂຮມອະທິຖານພ້ອມທັງອົດເຂົ້າແລ້ວ ລາວ ທັງສອງໄດ້ມອບ
ກຸ່ມຜູ້ເຊື່ອຄູ່ກຸ່ມໄວ້ກັບພຣະຜູ້ເປັນເຈົ້າ ຜູ້ເພິ່ນທີ່ພວກເຂົາໄດ້ເຊື່ອວາງໃຈນັ້ນ
14:24 ແລ້ວຫລັງຈາກເຂົາໄດ້ເດີນທາງຜ່ານແຄວ້ນ ປີສິເດຍ ກໍໄດ້ມາຮອດແຄວ້ນ
ປຳຟີເລຍ
14:25 ແລ້ວບັດພໍເຂົາໄດ້ປະກາດ ພຣະຄຳ ໃນເມືອງ ເປເຄ ແລ້ວ ເຂົາຈັ່ງລົງໄປ
ເມືອງ ອັດຕາເລຍ
14:26 ແລ້ວຈາກໝ້ອງນັ້ນ ເຂົາໄດ້ລົງເຮືອໃບແລ່ນໄປທາງເມືອງ ອັນຕີໂອເຂຍ
ເປັນເມືອງທີ່ເຂົາໄດ້ຮັບການມອບໝາຍໄວ້ໃນພຣະກະລຸນາທິຄຸນຂອງພຣະເຈົ້າ
ເພື່ອການງານນັ້ນທີ່ເຂົາໄດ້ເຮັດໃຫ້ສຳເລັດແລ້ວ
14:27 ບັດຮອດແລ້ວເຂົາໄດ້ເອີ້ນກຸ່ມຜູ້ເຊື່ອມາໂຮມກັນ ກັບໄດ້ເວົ້າສູ່ຟັງໝົດຄູ່ແນວ
ທີ່ພຣະເຈົ້າໄດ້ເຮັດຜ່ານໂຕເຂົາ ກັບທີ່ວ່າເພິ່ນໄດ້ເປີດປະຕູແຫ່ງຄວາມເຊື່ອໄວ້
ໃຫ້ພວກຄົນຕ່າງຊາດນຳ
14:28 ແລ້ວເຂົາທັງສອງຈັ່ງໄດ້ພັກຢູ່ກັບພວກລູກສິດຢູ່ນັ້ນ ເປັນເວລາດົນນານ

# ກິດຈະການ ບົດທີ 15

15:1 ແລ້ວມີ ຊາວຢິວ ຜູ້ລາງຄົນລົງມາຈາກແຄວ້ນ ຢູດາຍ  ໄດ້ແອບເຂົ້າໄປສອນ
ພວກພີ່ນ້ອງວ່າ “ຄັນບໍ່ເຮັດພິທີຕັດຕາມປະເພນີຂອງ ໂມເຊ  ເຈົ້າຊິລອດພົ້ນບໍ່ໄດ້
ເລີຍ”
15:2 ຈັ່ງຊັ້ນ ພໍ ໂປໂລ ກັບ ບາຣະນາບາ ໄດ້ໂຕ້ຖຽງໄລ່ລຽງກັນກັບພວກຢິວໝູ່ນັ້ນບໍ່
ແມ່ນນ້ອຍ ບັດນີ້ພີ່ນ້ອງຢູ່ນັ້ນຕົກລົງກັນວ່າ ຊິໃຫ້ ໂປໂລ ກັບ ບາຣະນາບາ  ພ້ອມ
ກັບພີ່ນ້ອງຜູ້ລາງຄົນຢູ່ນັ້ນ ຂຶ້ນໄປເມືອງ ເຢຣູຊາເລັມ ໄປຫາລືກັນກັບພວກທູດພິ-
ເສດກັບພວກຫລັກຜູ້ໃຫຍ່ໃນເລື່ອງນີ້
15:3 ຈັ່ງຊັ້ນ ບັດກຸ່ມຜູ້ເຊື່ອໄດ້ຈັດສົ່ງພວກ ລາວ ອອກໄປ ແລ້ວບັດພວມຜ່ານ
ແຄວ້ນ ຟອຍນິເກ ກັບແຄວ້ນ ຊາມາເຣຍ  ພວກ ລາວ ໄດ້ເວົ້າເລື່ອງທີ່ຄົນຕ່າງ-
ຊາດໄດ້ກັບໃຈໃໝ່ຮັບເຊື່ອນຳ ຈັ່ງເຮັດໃຫ້ພວກພີ່ນ້ອງຢູ່ນັ້ນເກີດການດີອົກດີໃຈ
ຢ່າງໃຫຍ່
15:4 ແລ້ວບັດມາຮອດເມືອງ ເຢຣູຊາເລັມ  ກຸ່ມຜູ້ເຊື່ອຢູ່ນັ້ນກັບພວກທູດພິເສດພ້ອມ
ກັບພວກຜູ້ຫລັກຜູ້ໃຫຍ່  ໄດ້ຕ້ອນຮັບພວກ ລາວ ຢ່າງດີ ແລ້ວພວກ ລາວ ຈັ່ງເວົ້າສູ່
ພີ່ນ້ອງຢູ່ເມືອງ ເຢຣູຊາເລັມ ຟັງເຖິງຄູ່ແນວທີ່ພຣະເຈົ້າໄດ້ເຮັດຜ່ານມືພວກ ລາວ
15:5 ແຕ່ໄດ້ມີພວກຄະນະ ຟາຣີຊາຍ ຜູ້ລາງຄົນທີ່ໄດ້ຮັບເຊື່ອໄດ້ເວົ້າຂຶ້ນວ່າ “ພວກ
ຄົນຕ່າງຊາດນັ້ນຈຳເປັນຕ້ອງເຂົ້າພິທີຕັດນຳ ກັບສັ່ງໃຫ້ເຂົາປະຕິບັດຕາມກົດ-
ບັນຍັດຂອງ ໂມເຊ ນຳ”
15:6 ຝ່າຍພວກທູດພິເສດກັບພວກຜູ້ຫລັກຜູ້ໃຫຍ່  ຈັ່ງໄດ້ມາຮ່ວມປຶກສາພິຈາລະ-
ນາກັນໃນເລື່ອງນັ້ນ
15:7 ແລ້ວຫລັງຈາກປຶກສາຫາລືກັນຫລາຍແລ້ວ  ເປໂຕ ຈັ່ງຢືນຂຶ້ນເວົ້າກັບພວກ-
ເຂົາວ່າ “ເຈົ້າພີ່ນ້ອງທັງຫລາຍ ພວກເຈົ້າຮູ້ກັນວ່າ ພຣະເຈົ້າໄດ້ເລືອກເອົາຂ້ອຍ
ອອກຈາກພວກເຮົາ ເພື່ອພວກຄົນຕ່າງຊາດຊິໄດ້ຮັບຟັງເລື່ອງຂ່າວປະເສີດແລ້ວ
ເຊື່ອ ໂດຍທາງການປະກາດຂອງຂ້ອຍນີ້

15:8 ຈັ່ງຊັ້ນ ພຣະເຈົ້າຜູ້ເພິ່ນທີ່ຮູ້ຈັກຈິດໃຈຂອງຄົນ ໄດ້ຮັບຮູ້ໃນພວກຄົນຕ່າງຊາດ
ຄືກັນ ໂດຍກະລຸນາມອບ ພຣະວິນຍານ ໄວ້ຢູ່ກັບພວກເຂົາຄືຈັ່ງໄດ້ກະລຸນາມອບ
ໄວ້ໃຫ້ຢູ່ກັບພວກເຮົາ
15:9 ແລ້ວພຣະເຈົ້າຈັ່ງຖືວ່າພວກເຮົາທັງສອງຝ່າຍບໍ່ໄດ້ແຕກຕ່າງກັນເລີຍ ຈັ່ງໄດ້
ຊຳລະໃຈເຂົາໃຫ້ບໍລິສຸດໂດຍຄວາມເຊື່ອຄືກັນ
15:10 ຈັ່ງຊັ້ນ ເປັນຫຍັງພວກເຈົ້າຄຶດຢາກລອງໃຈພຣະເຈົ້າບັດນີ້ ໂດຍການວາງ
ແອກໃສ່ຄໍຂອງພວກລູກສິດນັ້ນ ຂະນະທີ່ພວກພໍ່ຕະກູນຂອງເຮົາຫລືວ່າພວກເຮົາ
ເອງກໍດີ ບໍ່ສາມາດທີ່ຊິຮັບແບກໄດ້
15:11 ແຕ່ພວກເຮົາເຊື່ອວ່າ ເຮົາເອງກໍຊິລອດພົ້ນໂດຍພຣະກະລຸນາທິຄຸນຂອງ
ພຣະເຢຊູຄຣິດເຈົ້າ ຄືກັນກັບພວກເຂົາ ບໍ່ມີການແຕກຕ່າງກັນ”
15:12 ບັດນີ້ ພວກຄົນຢູ່ນັ້ນກໍມິດລົງ ແລ້ວຈັ່ງຟັງ ບາຣະນາບາ ກັບ ໂປໂລ ຣາຍງານ
ເຖິງເຄື່ອງໝາຍອັນສຳຄັນກັບເຫດການມະຫັດສະຈັນຕ່າງໆ ທີ່ພຣະເຈົ້າໄດ້ເຮັດ
ຜ່ານທາງໂຕເຂົາຕອນຢູ່ນຳພວກຄົນຕ່າງຊາດນັ້ນ
15:13 ຫລັງຈາກເວົ້າຈົບແລ້ວ ຢາໂກໂບ ຈັ່ງເວົ້າວ່າ “ເຈົ້າພີ່ນ້ອງທັງຫລາຍ ໃຫ້ຟັງ
ຂ້ອຍເວົ້ານີ້ເດີ້
15:14 ຄື ຊີໂມນເປໂຕ ໄດ້ບອກແລ້ວວ່າ ພຣະເຈົ້າໄດ້ໄປຢ້ຽມຢາມຄົນຕ່າງຊາດ
ແລ້ວ ເພື່ອຊິເລືອກເອົາຄົນກຸ່ມໜຶ່ງອອກມາຈາກພວກເຂົາເພື່ອພຣະນາມຂອງ
ເພິ່ນເອງ
15:15 ແລ້ວນີ້ກໍເປັນໄປຕາມຄຳທຳນາຍຂອງຜູ້ປະກາດພຣະຄຳທີ່ມີຂຽນໄວ້ວ່າ
15:16 ‘ຫລັງຈາກນີ້ເຮົາຊິກັບມາອີກ ແລ້ວຊິສ້າງວິຫານຂອງກະສັດ ດາວິດ ອັນທີ່ພັງ
ລົງແລ້ວໃຫ້ຂຶ້ນມາໃໝ່ ເອີ້ ເຮົາຊິກໍ່ມັນຂຶ້ນມາອີກໃຫ້ດີຄືເກົ່າ
15:17 ເພື່ອມະນຸດຂອງໂລກຜູ້ທີ່ຍັງຢູ່ຫັ້ນ ຊິໄດ້ມີໂອກາດສະແຫວງຫາພຣະຜູ້ເປັນ-
ເຈົ້ານຳ ຄືພວກຄົນຕ່າງຊາດທັງປວງນັ້ນ ຜູ້ທີ່ເອີ້ນຊື່ຕາມພຣະນາມຂອງເຮົາ
ພຣະຜູ້ເປັນເຈົ້າເພິ່ນຊິເຮັດໝົດຄູ່ແນວຕາມທີ່ເພິ່ນໄດ້ກ່າວໄວ້ນັ້ນ
15:18 ຄືພຣະເຈົ້າຮູ້ຈັກດີໃນ ກິດຈະການ ທັງໝົດຂອງເພິ່ນຕັ້ງແຕ່ອະດີດຕະການ
ສ້າງໂລກມາ’

15:19 ຈັ່ງຊັ້ນ ຂ້ອຍຄຶດເຫັນວ່າ ພວກເຮົາບໍ່ຄວນຊິສ້າງບັນຫາຫຍຸ້ງຍາກແນວນີ້ໃສ່
ຄົນຕ່າງຊາດ ຜູ້ທີ່ຫັນມາຫາພຣະເຈົ້າແລ້ວນັ້ນ
15:20 ແຕ່ວ່າ ເຮົາຄວນຊິຂຽນໜັງສືຝາກໄປຮອດເຂົາ ແນະນຳວ່າ ຄວນຍົກເວັ້ນ
ຈາກແນວກິນທີ່ຖວາຍໃຫ້ຮູບເຄົາລົບ ກັບຈາກການຫລິ້ນຊູ້ ກັບຈາກການກິນຊີ້ນ
ສັດທີ່ຖືກຮັດຄໍຕາຍ ພ້ອມທັງເວັ້ນຈາກການກິນເລືອດ ແຄ່ນີ້ເອງ
15:21 ຄືຕັ້ງແຕ່ບູຮານນະການມາ ພຣະຄຳ ໜັງສື ໂມເຊ ເຄີຍໄດ້ຮັບການອ່ານໃນ
ໝົດຄູ່ເມືອງທີ່ມີຄົນປະກາດເຖິງ ລາວ ຢູ່ໃນສາລາທຳ ໃນຄູ່ວັນຊະບາໂຕມື້ຢຸດພັກ
ນັ້ນ”
15:22 ບັດຟັງແລ້ວ ພວກທູດພິເສດກັບພວກຜູ້ຫລັກຜູ້ໃຫຍ່ ພ້ອມທັງຄູ່ຄົນໃນກຸ່ມຜູ້
ເຊື່ອຢູ່ນັ້ນ ເຫັນດີເຫັນຊອບທີ່ຊິເລືອກຜູ້ລາງຄົນໃນພວກເຂົາສົ່ງໄປເມືອງ ອັນຕິ-
ໂອເຂຍ ໄປກັບ ໂປໂລ ກັບ ບາຣະນາບາ ແລ້ວກໍມີ ຢູດາ ທີ່ມີຊື່ອີກວ່າ ບາຣະ-
ຊັບບາ ກັບ ຊີລາ ຊຶ່ງສອງຄົນນີ້ມີບົດບາດສຳຄັນໃນພວກພີ່ນ້ອງ
15:23 ແລ້ວເຂົາໄດ້ຂຽນຈົດໝາຍຝາກໃຫ້ຖືໄປວ່າ “ທູດພິເສດກັບຜູ້ຫລັກຜູ້ໃຫຍ່
ພ້ອມທັງພີ່ນ້ອງທັງຫລາຍໃນກຸ່ມຜູ້ເຊື່ອຢູ່ທາງນີ້ ຈັ່ງຂໍຝາກຄວາມຄຶດຮອດມາຍັງ
ພວກເຈົ້າ ພີ່ນ້ອງໃນພຣະເຈົ້າຄົນຕ່າງຊາດທີ່ຢູ່ເມືອງ ອັນຕິໂອເຂຍ ຢູ່ແຄວັນ ຊີ-
ເຣຍ ກັບຢູ່ແຄວັນ ກີລີເກຍ
15:24 ເນື່ອງຈາກວ່າພວກເຮົາໄດ້ຍິນເຖິງຜູ້ລາງຄົນໃນພວກເຮົາຢູ່ທາງນີ້ ໄດ້ອອກ
ໄປຫາພວກເຈົ້າແລ້ວໄດ້ເວົ້າລາງແນວທີ່ເຮັດໃຫ້ພວກເຈົ້າປັ່ນປ່ວນໃຈໂດຍຄຳ
ສອນວ່າ ‘ເຈົ້າຕ້ອງເຂົ້າພິທີຕັດກັບຮັກສາກົດບັນຍັດນຳຈັ່ງຊິລອດພົ້ນໄດ້’ ແຕ່ວ່າ
ພວກນັ້ນບໍ່ໄດ້ຮັບອະນຸຍາດຫລືຄຳສັ່ງໃດໆ ຈາກພວກເຮົາແນວນັ້ນເລີຍ
15:25 ຈັ່ງຊັ້ນ ພວກເຮົາຈັ່ງພ້ອມໃຈ ເຫັນດີເຫັນຊອບ ທີ່ຊິໃຊ້ຜູ້ລາງຄົນທີ່ເຮົາເລືອກ
ໄວ້ ໃຫ້ມາຫາພວກເຈົ້າພ້ອມກັບ ບາຣະນາບາ ກັບ ໂປໂລ ຜູ້ເປັນທີ່ຮັກແພງໃນ
ພຣະເຈົ້າຂອງພວກເຮົາ
15:26 ເປັນຜູ້ທີ່ໄດ້ອຸທິດຊີວິດຂອງເຂົາ ສ່ຽງໄພເພື່ອພຣະນາມຂອງພຣະເຢຊູຄຣິດ-
ເຈົ້າຂອງເຮົາມາແລ້ວ

15:27 ຈັ່ງຊັ້ນ ພວກເຮົາຢູ່ທາງນີ້ຈັ່ງໃຊ້ ຢູດາ ກັບ ຊີລາ ມາ ເປັນຜູ້ຊິຢືນຢັນຂໍ້ຄວາມ
ທີ່ເຮົາໄດ້ປຶກສາຫາລືຕົກລົງກັນໄວ້ ຈັ່ງໃຫ້ພວກເຈົ້າຟັງສຽງຈາກປາກຂອງເຂົາ
ໂດຍກົງ
15:28 ຍ້ອນວ່າທັງ ພຣະວິນຍານ ພ້ອມທັງພວກພວກເຮົາ ກໍເຫັນສົມຄວນທີ່ຊິບໍ່
ວາງພາລະໜັກໜາອີຫຍັງແນວນີ້ໃສ່ພວກເຈົ້າ ເວັ້ນໄວ້ແຕ່ຂໍ້ນ້ອຍໆ ນ້ອຍໆ ແນວ
ໝູ່ນັ້ນທີ່ຈຳເປັນຕໍ່ໄປນີ້
15:29 ຄືວ່າພວກເຈົ້າຄວນຊິງົດການກິນອາຫານທີ່ເຂົາໄດ້ບູຊາໃຫ້ຮູບເຄົາລົບ ກັບ
ເລືອດ ກັບຊີ້ນສັດທີ່ຖືກຮັດຄໍຕາຍ ກັບການຫລິ້ນຊູ້ ຄັ່ນພວກເຈົ້າຮັກສາໂຕໄວ້
ຈາກແນວໝູ່ນີ້ກໍຊິເປັນການດີແລ້ວ ຂໍໃຫ້ຢູ່ດີມີແຮງເດີ້”
15:30 ບັດລາຈາກກັນແລ້ວ ຄົນໝູ່ນັ້ນກໍເດີນທາງໄປເມືອງ ອັນຕິໂອເຂຍ ແລ້ວບັດ
ໄດ້ເອີ້ນໝູ່ພີ່ນ້ອງມາໂຮມກັນແລ້ວ ຈັ່ງມອບຈົດໝາຍສະບັບນັ້ນໃຫ້
15:31 ພໍແຕ່ໄດ້ອ່ານແລ້ວ ຕ່າງຄົນຕ່າງກໍດີອົກດີໃຈໃນຄຳປອບໂຍນໜຸນໃຈນັ້ນ
15:32 ຝ່າຍ ຢູດາ ກັບ ຊີລາ ນັ້ນ ຊຶ່ງເຂົາເອງເປັນຜູ້ພະຍາກອນຂອງພຣະເຈົ້ານຳ
ຈັ່ງໄດ້ເວົ້າຄຳໜຸນໃຈໃຫ້ພວກພີ່ນ້ອງຕໍ່ອີກຫລາຍແນວໃຫ້ມີກຳລັງໃຈຂຶ້ນ
15:33 ບັດເຂົາພັກເຊົາເມື່ອຍຢູ່ນັ້ນຈັກໜ່ອຍແລ້ວ ພວກພີ່ນ້ອງກໍສົ່ງເຂົາອອກໄປ
ຈັ່ງຝາກພົນສັນຕິພາບໄປຍັງພວກທູດພິເສດໃນເມືອງ ເຢຣູຊາເລັມ
15:34 ແຕ່ວ່າ ສ່ວນ ຊີລາ ນັ້ນ ລາວ ເຫັນດີທີ່ຊິຢູ່ນັ້ນຕໍ່ໄປອີກ
15:35 ແລ້ວຝ່າຍ ໂປໂລ ກັບ ບາຣະນາບາ ເຂົາກໍຢູ່ໃນເມືອງ ອັນຕິໂອເຂຍ ຕໍ່ໄປຄື
ກັນ ຈັ່ງໄດ້ສອນກັບປະກາດ ພຣະຄຳ ຂອງພຣະເຈົ້າໃຫ້ກັບຄົນອື່ນໆ ອີກຫລາຍ
ຄົນນຳ
15:36 ແລ້ວຕໍ່ມາອີກຫລາຍມື້ ໂປໂລ ຈັ່ງເວົ້າກັບ ບາຣະນາບາ ວ່າ “ໃຫ້ເຮົາຍ້ອນ
ກັບໄປຍາມພວກພີ່ນ້ອງໃນຄູ່ເມືອງໜ້ອງທີ່ເຮົາເຄີຍປະກາດ ພຣະຄຳ ຂອງພຣະ-
ເຈົ້າແລ້ວເຖີ ໄປຄອຍຖ້າເບິ່ງວ່າພວກເຂົາເປັນຈັ່ງໃດ”
15:37 ບັດນີ້ ຝ່າຍ ບາຣະນາບາ ຄຶດຢາກພາ ໂຢຮັນ ຜູ້ມີຊື່ອີກວ່າ ມາຣະໂກ ໄປນຳ

15:38 ແຕ່ ໂປໂລ ບໍ່ເຫັນສົມຄວນທີ່ຊິພາ ໂຢຮັນ ໄປນຳ ຍ້ອນວ່າຄາວກ່ອນນັ້ນໂຕ
ເຂົາໄດ້ປະຖິ້ມທູດທັງສອງນັ້ນໄວ້ໃນແຄວ້ນ ປຳຟີເລຍ ໜີປະເມືອບ້ານແທນທີ່ຊິ
ເຮັດການງານນຳກັນ
15:39 ແລ້ວໄດ້ເກີດມີການຂັດແຍ້ງກັນຢ່າງໃຫຍ່ໃນເລື່ອງນີ້ ເລີຍຕ້ອງແຍກກັນໄປ
ຄົນລະທາງ ບາຣະນາບາ ຈັ່ງພາ ໂຢຮັນ-ມາຣະໂກ ນັ້ນ ລົງເຮືອໄປເກາະ ກຸບໂຣ
15:40 ແຕ່ ໂປໂລ ລາວ ໄດ້ເລືອກເອົານາຍ ຊີລາ ໄປນຳ ລາວ ແລ້ວພວກພີ່ນ້ອງໄດ້
ຝາກເຂົາທັງສອງໄວ້ໃນຮົ່ມພຣະກະລຸນາທິຄຸນຂອງພຣະເຈົ້າກ່ອນທີ່ອອກໄປ
15:41 ແລ້ວ ລາວ ຈັ່ງອອກໄປຮອດທົ່ວແຄວ້ນ ຊີເຣຍ ກັບແຄວ້ນ ກີລີເກຍ ໄປໜູນ
ນ້ຳໃຈກຸ່ມຜູ້ເຊື່ອຕ່າງໆ ໃຫ້ແຂງແຮງຂຶ້ນ

## ກິດຈະການ ບົດທີ 16

16:1 ແລ້ວບັດ ໂປໂລ ໄປຮອດເມືອງ ເດຣະບາ ກັບເມືອງ ລີຊະທາ ນີ້ແຫລະ ຢູ່ນັ້ນ
ກໍມີລູກສິດຄົນໜຶ່ງຊື່ ຕີໂມທຽວ ເປັນລູກຊາຍຂອງຍິງ ຊາວຢິວ ຄົນໜຶ່ງທີ່ເຊື່ອ
ແລ້ວ ແຕ່ພໍ່ ຕີໂມທຽວ ເປັນຄົນເກຣັກ
16:2 ສ່ວນ ຕີໂມທຽວ ນັ້ນ ມີຊື່ສຽງດີໃນໝູ່ພີ່ນ້ອງທີ່ຢູ່ໃນເມືອງ ລີຊະທາ ກັບເມືອງ
ອີໂກນີອົນ
16:3 ໂປໂລ ຈັ່ງຄຶດຢາກໃຫ້ ຕີໂມທຽວ ໄປນຳ ເລີຍໃຫ້ເຂົາເຂົ້າພິທີຕັດ ຍ້ອນເຫັນ
ແກ່ພວກຢິວທີ່ຢູ່ເມືອງຕ່າງໆ ຢູ່ແຖວນັ້ນ ຍ້ອນພວກເຂົາຄູ່ຄົນຮູ້ຈັກວ່າພໍ່ຂອງ ຕີ-
ໂມທຽວ ເປັນຄົນເກຣັກ
16:4 ບັດພວກ ໂປໂລ ໄດ້ຜ່ານໄປເມືອງຕ່າງໆ ເຂົາກໍໄດ້ນຳເອົາຈົດໝາຍຂໍ້ຕົກລົງ-
ມາຈາກພວກທູດພິເສດ ກັບຈາກພວກຜູ້ຫລັກຜູ້ໃຫຍ່ກຸ່ມຜູ້ເຊື່ອໃນເມືອງ ເຢຣູຊາ-
ເລັມ ມອບໄວ້ໃຫ້ຄົນທັງຫລາຍໃນຄູ່ເມືອງ
16:5 ຈັ່ງຊັ້ນກຸ່ມຜູ້ເຊື່ອທັງໝົດຈັ່ງແຂງແຮງຂຶ້ນໃນຄວາມເຊື່ອ ແລ້ວຈຳນວນຄົນທີ່
ຮັບເຊື່ອກໍໄດ້ເພີ່ມຂຶ້ນຫລາຍຄູ່ມື້
16:6 ບັດພວກເຂົາໄດ້ເດີນທາງຜ່ານໄປທົ່ວແຄວ້ນ ຟີເຄຍ ກັບແຄວ້ນ ຄາລາເຕຍ
ແລ້ວ ພຣະວິນຍານ ຂອງພຣະເຈົ້າເລີຍຫ້າມໄວ້ ບໍ່ໃຫ້ເຂົ້າປະກາດ ພຣະຄຳ ໃນ
ເຂດ ເອເຊຍ

16:7 ແລ້ວຫລັງຈາກພວກເຂົາໄປຮອດແຄວ້ນ ມີເຊຍ ກໍພະຍາຍາມຊິເຂົ້າໄປໃນ
ແຄວ້ນ ບີທີເນຍ ແຕ່ ພຣະວິນຍານ ບໍ່ໄດ້ໂຜດໃຫ້ເຂົ້າຄືກັນ
16:8 ແລ້ວບັດພວກເຂົາໄດ້ເດີນທາງຜ່ານແຄວ້ນ ມີເຊຍ ກໍໄດ້ລົງມາຍັງເມືອງ ໂທ-
ອາດ
16:9 ແລ້ວໃນເວລາກາງຄືນ ໂປໂລ ໄດ້ຝັນເຫັນຜູ້ຊາຍຊາວ ມາເກໂດເນຍ ຄົນໜຶ່ງ
ຢືນຢູ່ອ້ອນວອນວ່າ “ຂໍກະລຸນາມາຊ່ອຍພວກຂ້ອຍໃນແຄວ້ນ ມາເກໂດເນຍ ນີ້ແ
ໜ່ທ້ອນ”
16:10 ພໍແຕ່ ໂປໂລ ໄດ້ເຫັນນິມິດນັ້ນແລ້ວ ພວກເຮົາຈັ່ງຕັ້ງໃຈຫາໂອກາດທັນທີທີ່ຊິ
ໄປແຄວ້ນ ມາເກໂດເນຍ ຍ້ອນເຂົ້າໃຈແນ່ວ່າ ພຣະເຈົ້າໄດ້ເອີ້ນໃຫ້ໄປປະກາດ
ຂ່າວປະເສີດກັບຄົນຢູ່ແຄວ້ນນັ້ນ
16:11 ຈັ່ງຊັ້ນ ບັດໄດ້ລົງເຮືອອອກຈາກເມືອງ ໂທອາດ ແລ້ວກໍແລ່ນກົງໄປເກາະ
ຊາໂມທາເກ ແລ້ວບັດມື້ອື່ນມາກໍໄດ້ຮອດເມືອງ ເນອາໂປລີ
16:12 ແລ້ວຈາກນັ້ນກໍໄດ້ໄປຮອດເມືອງ ຟີລິບປອຍ ທີ່ເປັນເມືອງເອກໃນແຖວໆ
ນັ້ນ ຂອງເຂດແຄວ້ນ ມາເກໂດເນຍ ກັບເປັນຫົວເມືອງຂຶ້ນຂອງ ໂຣມ ນຳ ພວກ
ເຮົາຈັ່ງພັກຢູ່ໃນເມືອງນັ້ນຫລາຍມື້
16:13 ແລ້ວໃນມື້ຢຸດພັກງານນັ້ນ ພວກເຮົາໄດ້ ອອກຈາກເມືອງໄປຝັ່ງແມ່ນ້ຳ ທີ່
ເຂົ້າໃຈວ່າຕາມຫລັກເປັນໜ້ອງສຳລັບການອະທິຖານ ຈັ່ງໄດ້ນັ່ງຊຸມກັບພວກແມ່-
ຍິງທີ່ຕຸ້ມໂຮມກັນຢູ່ນັ້ນ
16:14 ແລ້ວມີຍິງຄົນໜຶ່ງຊື່ ລີເດຍ ໄດ້ຍິນພວກເຮົາເວົ້າ ຍິງນັ້ນມາຈາກເມືອງ ທົວ-
ເຕຣາ ເປັນຄົນຂາຍຜ້າສີມ່ວງ ກັບເປັນຜູ້ທີ່ເຄົາລົບນັບຖືພຣະເຈົ້າ ຊຶ່ງພຣະຜູ້-
ເປັນເຈົ້າໄດ້ເປີດໃຈເຂົາໃຫ້ຕັ້ງໃຈຟັງໃນຖ້ອຍຄຳທີ່ ໂປໂລ ເວົ້າຢູ່ນັ້ນ
16:15 ແລ້ວຍິງຜູ້ນັ້ນພ້ອມທັງຄອບຄົວຂອງເຂົາໄດ້ຮັບການຈຸ່ມນ້ຳ ແລ້ວຈັ່ງອ້ອນ-
ວອນຕໍ່ພວກເຮົາວ່າ “ຄັ່ນພວກເຈົ້າເຫັນວ່າຂ້ອຍນີ້ເປັນຄົນຈິ່ງຮັກພັກດີຕໍ່ພຣະຜູ້-
ເປັນເຈົ້າ ກໍເຊີນເຂົ້າມາພັກອາໄສໃນເຮືອນຂອງຂ້ອຍເຖີ້” ແລ້ວເຂົາໄດ້ຊັກຊວນຢູ່
ຈັ່ງຊັ້ນຈົນກວ່າພວກເຮົາຂັດໃຈເຂົາບໍ່ໄດ້ເລີຍ

16:16 ແລ້ວມັນເປັນໄປທີ່ວ່າ ບັດພວກເຮົາພວມໄປອະທິຖານຢູ່ ພໍດີມີຍິງສາວຄົນ
ໜຶ່ງທີ່ມີຜີເຂົ້າສິງ ເປັນຜີອອກຄຳທຳນາຍ ໄດ້ມາພໍ້ກັບພວກເຮົາ ແລ້ວພວກນາຍ
ຂອງຍິງສາວນັ້ນໄດ້ກຳໄລຫລາຍຂະໜາດໂດຍການທາຍຂອງເຂົາ
16:17 ແລ້ວຍິງສາວນັ້ນໄດ້ຕິດຕາມ ໂປໂລ ກັບພວກເຮົາໄປ ຮ້ອງວ່າ “ຄົນໝູ່ນີ້ເປັນ
ຜູ້ຮັບໃຊ້ຂອງພຣະເຈົ້າຜູ້ສູງສຸດ ໄດ້ມາປ່າວປະກາດທາງລອດພົ້ນໃຫ້ຄົນເຮົາທັງ-
ຫລາຍ”
16:18 ຍິງຄົນນັ້ນໄດ້ເຮັດຈັ່ງຊັ້ນເປັນເວລາຫລາຍມື້ ສ່ວນ ໂປໂລ ກໍເກີດກວນໃຈ
ຫລາຍ ຈັ່ງຫັນໜ້າສັ່ງຜີນັ້ນວ່າ “ເຮົາສັ່ງມຶງ ໃນພຣະນາມຂອງພຣະເຢຊູຄຣິດເຈົ້າ
ໃຫ້ອອກຈາກຍິງຜູ້ນີ້ທັນທີເລີຍ” ແລ້ວຜີນັ້ນໄດ້ອອກຈາກຍິງໃນໂມງນັ້ນເລີຍ
16:19 ແຕ່ຝ່າຍພວກນາຍຂອງຍິງນັ້ນ ບັດເຫັນວ່າໝົດຫວັງທີ່ຊິໄດ້ເງິນຕໍ່ໄປອີກ
ພວກເຂົາຈັ່ງຈັບ ໂປໂລ ກັບ ຊີລາ ລາກອອກມາຕໍ່ໜ້າເຈົ້າໜ້າທີ່ເມືອງຢູ່ໜ້າຕະ-
ຫລາດ
16:20 ບັດນຳມາຮອດຄະນະເຈົ້າໜ້າທີ່ເມືອງແລ້ວຈັ່ງເວົ້າວ່າ “ຄົນພວກນີ້ເປັນພວກ
ຄົນ ຢິວ ໄດ້ກໍ່ການວຸ້ນວາຍຫລາຍໃນເມືອງຂອງເຮົານີ້
16:21 ກັບໄດ້ສອນທຳນຽມແປກໆ ທີ່ຜິດກົດໝາຍຂອງພວກຊາວ ໂຣມ ເຮົາ ເປັນ
ແນວທີ່ຊິຮັບຫລືນັບຖືບໍ່ໄດ້ເລີຍ”
16:22 ບັດນີ້ ປະຊາຊົນກໍໄດ້ລຸກຂຶ້ນມາຕໍ່ຕ້ານ ໂປໂລ ກັບ ຊີລາ ຝ່າຍຄະນະເຈົ້າ-
ໜ້າທີ່ເມືອງນັ້ນໄດ້ກະຊາກເສື້ອຂອງ ລາວ ທັງສອງອອກ ແລ້ວສັ່ງໃຫ້ເອົາໄມ້ແສ້
ຄ້ຽນຕີ
16:23 ບັດໄດ້ຂ້ຽນຫລາຍບາດແລ້ວ ຈັ່ງຄຸມຂັງໄວ້ໃນຄຸກ ສັ່ງນາຍຄຸກໃຫ້ເຝົ້າຮັກສາ
ໄວ້ຢ່າງໝັ້ນຄົງ
16:24 ນາຍຄຸກບັດຮັບຄຳສັ່ງຈັ່ງຊັ້ນແລ້ວ ຈັ່ງນຳ ໂປໂລ ກັບ ຊີລາ ໂຍນເຂົ້າໄປຄຸມ
ຂັງໄວ້ໃນຫ້ອງຂັງຊັ້ນໃນ ແລ້ວໃສ່ໂສ້ທີ່ຂໍ້ຕີນຂອງພວກເຂົາໄວ້ຢ່າງແໜ້ນໜາ
16:25 ແຕ່ຕອນທ່ຽງຄືນ ໂປໂລ ກັບ ຊີລາ ພວມອະທິຖານກັບຮ້ອງເພງສັນລະເສີນ
ພຣະເຈົ້າ ແລ້ວພວກນັກໂທດຢູ່ນັ້ນໄດ້ຟັງຢູ່

16:26 ແລ້ວໃນທ່າງນັ້ນພໍດີ ໄດ້ເກີດແຜ່ນດິນໄຫວຢ່າງແຮງ ຈົນຮາກຖານຂອງ
ຄຸກໄດ້ສັ່ນສະເທືອນ ແລ້ວປະຕູຂອງຄຸກໄດ້ເປີດອອກໝົດຄູ່ບານ ເຄື່ອງຈອງຈໍາ
ກໍໄດ້ຫລຸດທັນທີຈາກນັກໂທດໝົດຄູ່ຄົນ
16:27 ຝ່າຍນາຍຄຸກກໍຕື່ນຂຶ້ນເຫັນປະຕູຄຸກເປີດຢູ່ ຄິດວ່າພວກນັກໂທດໜີໄປໝົດ
ແລ້ວ ຈັ່ງເກືອບດາບອອກມາໝາຍວ່າຊິຂ້າໂຕຕາຍ
16:28 ແຕ່ ໂປໂລ ໄດ້ຮ້ອງອອກສຽງດັ່ງວ່າ "ຢ່າທຳລາຍໂຕເອງເລີຍ ພວກເຮົາຍັງຢູ່
ນີ້ໝົດຄູ່ຄົນ"
16:29 ບັດນີ້ ນາຍຄຸກຈັ່ງສັ່ງໃຫ້ໄຕ້ໄຟມາ ແລ້ວແລ່ນໂຕສັ່ນເຂົ້າໄປຂາບລົງກົງໜ້າ
ໂປໂລ ກັບ ຊີລາ
16:30 ແລ້ວກໍພາ ລາວ ທັງສອງອອກມາເວົ້າວ່າ "ທ່ານເຈົ້າຂ້າ ຂ້ອຍນີ້ຕ້ອງເຮັດ
ແນວໃດຈັ່ງຊິລອດພົ້ນໄດ້"
16:31 ໂປໂລ ກັບ ຊີລາ ຈັ່ງບອກເຂົາວ່າ "ໃຫ້ເຊື່ອວາງໃຈໃນພຣະເຢຊູຄຣິດເຈົ້າເດີ້
ແລ້ວເຈົ້າຈັ່ງຊິລອດພົ້ນໄດ້ ພ້ອມທັງເຮືອນຂອງເຈົ້ານຳ"
16:32 ແລ້ວ ໂປໂລ ກັບ ຊີລາ ຈັ່ງບອກ ພຣະຄໍາ ຂອງພຣະເຈົ້າໃຫ້ນາຍຄຸກຟັງ ພ້ອມ
ກັບຄູ່ຄົນຢູ່ໃນເຮືອນຂອງເຂົານຳ
16:33 ແລ້ວໃນກາງຄືນໂມງດຽວນັ້ນເອງ ນາຍຄຸກຈັ່ງນຳ ໂປໂລ ກັບ ຊີລາ ອອກໄປ
ລ້າງແຜຮອຍຄ້ຽນຕີນັ້ນ ກັບໄດ້ຮັບການຈຸ່ມນ້ຳພ້ອມທັງຄູ່ຄົນໃນເຮືອນຂອງເຂົາ
ນຳ
16:34 ແລ້ວບັດນາຍຄຸກໄດ້ພາ ໂປໂລ ກັບ ຊີລາ ເຂົ້າໄປໃນເຮືອນຂອງເຂົາ ເຂົາຈັດ
ໂຕະລ້ຽງພວກ ລາວ ສະແດງຄວາມຍິນດີຢ່າງໃຫຍ່ຍ້ອນໄດ້ຮັບເຊື່ອແລ້ວໃນ
ພຣະເຈົ້າພ້ອມທັງເຮືອນນຳ
16:35 ບັດແຈ້ງແລ້ວ ຄະນະເຈົ້າໜ້າທີ່ເມືອງຈັ່ງໃຊ້ພວກນາຍປະຈຳການໄປ ສັ່ງວ່າ
"ໃຫ້ປ່ອຍຜູ້ຊາຍສອງຄົນນັ້ນເດີ້"
16:36 ນາຍຄຸກຈັ່ງບອກ ໂປໂລ ວ່າ "ຄະນະເຈົ້າໜ້າທີ່ເມືອງໄດ້ໃຊ້ຄົນມາບອກໃຫ້
ປ່ອຍພວກເຈົ້າ ຈັ່ງຊັ້ນບັດນີ້ເຊີນອອກມາເຖີ ໄປໂດຍສັນຕິພາບເລີຍ"

16:37 ແຕ່ ໂປໂລ ໄດ້ຄ້ານວ່າ “ຄະນະເຈົ້າໜ້າທີ່ເມືອງນັ້ນໄດ້ສັ່ງໃຫ້ຄຸ້ງນຕີເຮົາ ຜູ້
ເປັນຄົນສັນຊາດ ໂຣມ ຕໍ່ໜ້າຄົນທັງຫລາຍກ່ອນໄດ້ຕັດສິນຄວາມ ກັບໄດ້ຄຸມຂັງ
ເຮົາໄວ້ໃນຄຸກນຳ ບັດນີ້ພວກເຂົາຄິດຊິໃຫ້ເຮົາອອກໄປເປັນການລັບບໍ້ ບໍ່ໄດ້ແລ້ວ
ໃຫ້ພວກເຂົາມານຳເຮົາອອກໄປເປັນທາງການເດີ້”
16:38 ບັດນີ້ ພວກນາຍປະຈຳການຈັ່ງເອົາຄວາມໄປແຈ້ງຄະນະເຈົ້າໜ້າທີ່ເມືອງ
ບັດຄະນະເຈົ້າເມືອງໄດ້ຍິນວ່າ ລາວ ທັງສອງເປັນຄົນສັນຊາດ ໂຣມ ກໍຕົກໃຈຢ້ານ
16:39 ແລ້ວຄະນະເຈົ້າໜ້າທີ່ເມືອງຈັ່ງມາວິ່ງວອນຮ້ອງຂໍໂທດ ໂປໂລ ກັບ ຊີລາ ເປັນ
ຢ່າງໃຫຍ່ ໄດ້ນຳເຂົາອອກຈາກຄຸກ ແລ້ວຈັ່ງຂໍເຊີນໃຫ້ເຂົາອອກຈາກເມືອງໄປ
16:40 ບັດເຂົາທັງສອງໄດ້ອອກຈາກຄຸກໄປແລ້ວ ຈັ່ງໄດ້ແວະເຂົ້າໄປໃນເຮືອນຂອງ
ນາງ ລີເດຍ ບັດໄດ້ຮັບໄດ້ເຫັນພວກພີ່ນ້ອງກໍເວົ້າໜຸນນ້ຳໃຈພວກເຂົາແລ້ວຈັ່ງລາ
ໄປ

## ກິດຈະການ ບົດທີ 17

17:1 ແລ້ວບັດ ໂປໂລ ກັບ ຊີລາ ໄດ້ເດີນທາງຜ່ານເມືອງ ອຳພີໂປລີ ກັບເມືອງ ອາ-
ໂປໂລນີ ແລ້ວ ຈັ່ງມາຮອດເມືອງ ເທຊະໂລນິກ ຢູ່ນັ້ນກໍມີສາລາທຳຂອງພວກ-
ຢິວຄືກັນ
17:2 ໂປໂລ ຈັ່ງເຂົ້າໄປຮ່ວມກັບພວກຄົນ ຢິວ ຢູ່ໃນນັ້ນຕາມທີ່ເຄີຍ ໄດ້ອ້າງເຫດ-
ຜົນຈາກຂໍ້ຄວາມໃນ ພຣະຄຳ ຂອງພຣະເຈົ້າ ໂຕ້ຕອບກັນກັບເຂົາຢູ່ນັ້ນໃນມື້ຢຸດ
ພັກວັນຊະບາໂຕ ເປັນເວລາຮອດສາມອາທິດ
17:3 ໄດ້ໄຂຂໍ້ຄວາມອອກຊີ້ແຈງ ເຖິງພິສູດວ່າຈຳເປັນທີ່ ພຣະຄຣິດ ຕ້ອງທົນທຸກທໍ-
ລະມານຄືງປະຫານ ແລ້ວຈັ່ງເປັນຂຶ້ນມາຈາກຕາຍ ກັບໄດ້ເວົ້າຕໍ່ອີກວ່າ “ ພຣະ-
ເຢຊູ ອົງນີ້ເນາະທີ່ເຮົາປະກາດໃຫ້ພວກເຈົ້ານີ້ ຄື ພຣະຄຣິດ ພຣະຜູ້ໂຜດອົງນັ້ນ
ເອງ”
17:4 ແລ້ວຜູ້ລາງຄົນໃນພວກເຂົາໄດ້ຮັບເຊື່ອ ແລ້ວຈັ່ງເຂົ້າຮ່ວມກັນກັບ ໂປໂລ ກັບ
ຊີລາ ພວກນີ້ເປັນຊາວເກຣັກຜູ້ທີ່ເຄົາລົບພຣະເຈົ້າມີຈຳນວນຫລາຍ ກັບມີພວກ
ແມ່ຍິງຜູ້ມີຖານະກໍບໍ່ນ້ອຍທີ່ໄດ້ຮັບເຊື່ອນຳ

17:5 ແຕ່ຝ່າຍພວກຢິວຜູ້ທີ່ບໍ່ເຊື່ອກໍເກີດອິດສາບັງບຽດ ຈັ່ງໄປຄົບຄິດກັບຄົນອັນ-
ທະພານຕາມຕະຫລາດ ລວບລວມຄົນມາເປັນຝູງຊົນ ກໍ່ການກະບົດອາລະວາດ
ໃນບ້ານເມືອງ ແລ້ວບຸກເຂົ້າເຮືອນຂອງ ຢາຊົນ ຕັ້ງໃຈວ່າຊິຈັບ ໂປໂລ ກັບ ຊີລາ
ລາກອອກມາມອບໄວ້ໃຫ້ໄທບ້ານໄທເມືອງ
17:6 ແຕ່ບັດບໍ່ພົ້ພວກ ລາວ ຈັ່ງລາກ ຢາຊົນ (ເຈົ້າຂອງເຮືອນ) ອອກມາ ພ້ອມທັງ
ພວກພີ່ນ້ອງຜູ້ລາງຄົນ ນໍາໄປຫາຄະນະເຈົ້າໜ້າທີ່ຂອງເມືອງ ຮ້ອງກັນວ່າ “ຄົນໝູ່
ນີ້ໄດ້ຄວ່ໍາຮອດທັງແຜ່ນດິນໂລກເລີຍ ແລ້ວກໍໄດ້ມາກໍ່ກວນຢູ່ບ່ອນນີ້ນໍາ
17:7 ແລ້ວ ຢາຊົນ ຜູ້ນີ້ໄດ້ຕ້ອນຮັບພວກເຂົາໄວ້ ແລ້ວພັກພວກຄົນໝູ່ນີ້ໄດ້ເຮັດ
ແນວທີ່ຜິດຄໍາສັ່ງຂອງຈັກກະພັດ ກາຍຊາ ໂດຍບອກສອນກັນວ່າມີກະສັດອີກອົງ
ໜຶ່ງຄື ພຣະເຢຊູ ”
17:8 ບັດພໍຄະນະເຈົ້າໜ້າທີ່ຂອງເມືອງກັບປະຊາຊົນ ໄດ້ຍິນແນວນັ້ນ ກໍເກີດປັ່ນ-
ປ່ວນຮ້ອນໃຈຫລາຍ
17:9 ແລ້ວໄດ້ເອີ້ນເອົາຄ່າປະກັນໂຕຈາກ ຢາຊົນ ກັບຄົນອື່ນໆ ນັ້ນ ແລ້ວຈັ່ງປ່ອຍ
ໄປ
17:10 ແລ້ວພວກພີ່ນ້ອງໄດ້ສົ່ງ ໂປໂລ ກັບ ຊີລາ ອອກໄປຢ່າງໄວໆ ໄປຍັງເມືອງ
ເບໂຣຢາ ເປັນເວລາກາງຄືນ ບັດຮອດແລ້ວພວກ ລາວ ໄດ້ເຂົ້າໄປໃນສາລາທໍາ
ຂອງພວກຢິວຄືເກົ່າ
17:11 ແຕ່ວ່າຊາວເມືອງ ເບໂຣຢາ ນັ້ນ ເປັນຄົນສຸພາບ ຈິດໃຈສູງກວ່າຊາວເມືອງ
ເທຊະໂລນິກ ຄືເຂົາໄດ້ຮັບ ພຣະຄໍາ ໂດຍຄວາມເຕັມອົກເຕັມໃຈ ກັບໄດ້ຄົ້ນຄວ້າ
ໃນ ພຣະຄໍາ ຂອງພຣະເຈົ້າຄູ່ມື້ເພື່ອຊິຮູ້ວ່າ ຂໍ້ຄວາມແນວໝູ່ນັ້ນໄດ້ເປັນຈິງອີຫລີ
ຄືກັນກັບກ່າວມານັ້ນ
17:12 ຈັ່ງຊັ້ນ ໄດ້ມີ ຊາວຢິວ ຫລາຍຄົນໃນພວກເຂົາທີ່ໄດ້ຮັບເຊື່ອ ພ້ອມກັບແມ່ຍິງ
ເກຣັກຜູ້ມີຖານະ ຮ່ວມທັງຜູ້ຊາຍຊາວເກຣັກນໍາກໍບໍ່ນ້ອຍ
17:13 ແຕ່ບັດພວກຢິວໃນເມືອງ ເທຊະໂລນິກ ຮູ້ວ່າ ໂປໂລ ໄດ້ເຂົ້າໄປປະກາດ
ພຣະຄໍາ ຂອງພຣະເຈົ້າໃນເມືອງ ເບໂຣຢາ ຄືກັນ ເຂົາໄດ້ມາຍຸແຫຍ່ປຸກລະດົມ
ປະຊາຊົນຢູ່ນັ້ນນໍາ

17:14 ແລ້ວໃນຫວ່າງນັ້ນພໍດີ ພວກພີ່ນ້ອງຈັ່ງສົ່ງ ໂປໂລ ອອກໄປທາງທະເລ ແຕ່
ຊີລາ ກັບ ຕີໂມທຽວ ກໍພັກຢູ່ນັ້ນຕໍ່
17:15 ແລ້ວຝ່າຍໝູ່ພີ່ນ້ອງທີ່ໄປສົ່ງ ໂປໂລ ນັ້ນ ໄດ້ໄປສົ່ງຮອດນະຄອນ ອາແຖນ
ແລ້ວບັດພໍໄດ້ຮັບຝາກຄຳສັ່ງຂອງ ໂປໂລ ໃຫ້ໄປບອກ ຊີລາ ກັບ ຕີໂມທຽວ ຄືໃຫ້
ຟ້າວໄປຫາ ໂປໂລ ໄວໆ ແລ້ວພວກເຂົາຈັ່ງຈາກໄປ
17:16 ບັດ ໂປໂລ ຄອງຖ້າ ຊີລາ ກັບ ຕີໂມທຽວ ຢູ່ໃນນະຄອນ ອາແຖນ ນັ້ນ ລາວກໍ
ເດືອດຮ້ອນໃນໃຈບັດເຫັນວ່າມີແຕ່ຮູບເຄົາລົບເຕັມໄປທົ່ວເມືອງ
17:17 ຈັ່ງຊັ້ນ ລາວ ເລີຍເຂົ້າໃນສາລາທຳໂຕ້ຕອບກັບພວກຄົນ ຢິວ ກັບຄົນຕ່າງ-
ຊາດຜູ້ທີ່ເຄົາລົບພຣະເຈົ້ານຳ ພ້ອມທັງຄົນຕ່າງໆ ທີ່ຢູ່ໃນຕະຫລາດຄູ່ມື້ໆ
17:18 ແລ້ວບັດນີ້ ມີນັກປັດຊະຍາຜູ້ລາງຄົນໃນພວກ ເອປີກູຣຽວ ກັບໃນພວກ ຊະ-
ໂຕອິກ ໄດ້ຮັບກັບ ໂປໂລ ແລ້ວຜູ້ລາງຄົນວ່າ “ຄົນຜູ້ນີ້ມາເວົ້າອີຫຍັງແນວທີ່ບໍ່ເປັນ
ສາລະ” ແລ້ວອີກຜູ້ລາງຄົນວ່າ “ເບິ່ງຊົງຄືເຂົາພວມປະກາດເລື່ອງພະແປກໆ
ຈາກຕ່າງຖິ່ນ” ກໍ່ພວກເຂົາເວົ້າຈັ່ງຊັ້ນຍ້ອນວ່າ ໂປໂລ ພວມປະກາດເລື່ອງ ພຣະ-
ເຢຊູ ກັບການເປັນຂຶ້ນມາຈາກຕາຍຂອງເພິ່ນ
17:19 ແລ້ວພວກເຂົາຈັ່ງພາ ໂປໂລ ຂຶ້ນໄປສະພາ ອາເຣໂອປາໂກ (ຢູ່ຍອດພູ ພະ-
ອັງຄານ ) ແລ້ວຖາມລາວວ່າ “ພວກເຮົາຂໍຢາກຮັບຟັງວ່າ ຄຳສອນໃໝ່ໆ ທີ່ເຈົ້າ
ເວົ້ານີ້ ມັນເປັນຈັ່ງໃດ
17:20 ຍ້ອນວ່າເຈົ້າໄດ້ເອົາເລື່ອງແປກໆ ມາເຂົ້າຫູຂອງເຮົາ ຈັ່ງຊັ້ນ ພວກເຮົາຢາກ
ຮູ້ຈັກໃນເລື່ອງນີ້ໝາຍຄວາມວ່າຈັ່ງໃດ”
17:21 (ເຂົາເວົ້າຈັ່ງຊີ້ຍ້ອນວ່າ ຊາວ ອາແຖນ ກັບຊາວຕ່າງຊາດຢູ່ນັ້ນ ບໍ່ໄດ້ໃຊ້ເວ-
ລາໃນແນວອື່ນໆ ນອກຈາກຊິເວົ້າຫລືຊິຮັບຟັງໃນເລື່ອງແນວແປກໆ ໃໝ່ໆ)
17:22 ບັດນີ້ ໂປໂລ ຈັ່ງຢືນຂຶ້ນຕໍ່ໜ້າຄົນໝູ່ນັ້ນຢູ່ກາງສະພາເທິງໂນນພູ ພະອັງ-
ຄານ ແລ້ວຕັ້ງຕົ້ນເວົ້າວ່າ “ທ່ານຊາວນະຄອນ ອາແຖນ ຜູ້ຂ້າຄຶດເຫັນວ່າພວກ
ເຈົ້ານັບຖືພວກພະຕ່າງໆ ຢ່າງເຄັ່ງຄັດ
17:23 ຍ້ອນວ່າບັດຜູ້ຂ້າເດີນທາງມາ ໄດ້ສັງເກດແນວໜຶ່ງທີ່ພວກເຈົ້ານົບໄຫວ້ນັ້ນ
ຄືຜູ້ຂ້າໄດ້ເຫັນແທ່ນບູຊາແທ່ນໜຶ່ງທີ່ມີຄຳຈາລຶກໄວ້ວ່າ ‘ເຖິງພະທີ່ຍັງບໍ່ທັນຮູ້ຈັກ’

ຈັ່ງຊັ້ນຜູ້ຂ້າຂໍປະກາດຊີ້ແຈງໃຫ້ພວກເຈົ້າຮູ້ເຖິງພະຜູ້ນັ້ນທີ່ພວກເຈົ້າຍັງບໍ່ທັນຮູ້-
ຈັກ ແຕ່ຍັງຫານົບຫາໄຫວ້ຢູ່
17:24 ຄືພຣະຜູ້ນີ້ເປັນພຣະເຈົ້າ ຜູ້ທີ່ສ້າງໂລກ ກັບໝົດຄູ່ອັນຄູ່ແນວທີ່ມີຢູ່ໃນນັ້ນ
ແລ້ວຍ້ອນວ່າເພິ່ນໄດ້ເປັນເຈົ້າຂອງຟ້າສະຫວັນກັບແຜ່ນດິນໂລກນີ້ ເພິ່ນບໍ່ໄດ້
ສະຖິດຫລືອາໄສຢູ່ໃນແນວຕ່າງໆ ທີ່ເຮັດຂຶ້ນມາໂດຍມືຄົນ
17:25 ແລ້ວເພິ່ນບໍ່ໄດ້ຮັບການຂາບໄຫວ້ໂດຍມືຄົນ ຄືວ່າຈຳເປັນຊິຕ້ອງໃຫ້ໃຜປະ-
ຕິບັດລ້ຽງເພິ່ນ ຍ້ອນວ່າພຣະເຈົ້າຜູ້ນີ້ໂຜດໃຫ້ໝົດຄູ່ອັນຄູ່ແນວມີຊີວິດມີລົມຫາຍ-
ໃຈນຳ
17:26 ແລ້ວພຣະເຈົ້ານີ້ເພິ່ນໄດ້ສ້າງຄົນຄູ່ຊາດສືບທອດຈາກເລືອດສາຍດຽວກັນ
ໃຫ້ພວກເຂົາຢູ່ທົ່ວພື້ນແຜ່ນດິນໂລກ ກັບໄດ້ກຳນົດເວລາກັບເຂດແດນເປັນທີ່ອາ-
ໄສໃຫ້ເຂົາຢູ່
17:27 ເພື່ອວ່າ ພວກເຂົາຊິໄດ້ຊອກຫາພຣະຜູ້ເປັນເຈົ້ານີ້ ຫາລາງເທື່ອເຂົາ ອາດ ສິງ
ມະຫາພົ້ເພິ່ນໄດ້ ຍ້ອນວ່າເພິ່ນເອງບໍ່ໄດ້ຢູ່ຫ່າງໄກຈາກຄົນເຮົາແຕ່ລະຄົນເລີຍ
17:28 ຄື ຄົນເຮົາມີຊີວິດຄວາມເປັນຢູ່ກັບການເຄື່ອນໄຫວໄປມາຢູ່ໃນເພິ່ນຜູ້ນີ້ ຕາມ
ທີ່ພວກນັກຂຽນກັບກະວີຜູ້ລາງຄົນໃນພວກເຈົ້າເຄີຍກ່າວໄວ້ວ່າ 'ຄົນເຮົາທັງ-
ຫລາຍເປັນເຊື້ອສາຍສືບທອດມາຈາກເພິ່ນ'
17:29 ຈັ່ງຊັ້ນເນາະ ເນື່ອງຈາກວ່າເຮົາເປັນເຊື້ອສາຍທີ່ສືບທອດມາຈາກເພິ່ນແລ້ວ
ເຮົາບໍ່ຄວນຖືວ່າເພິ່ນຜູ້ນີ້ເປັນຄືທອງ ເງິນ ຫລື ຫີນ ທີ່ໄດ້ແກະສະຫລັກໂດຍສິລະ-
ປະຕາມຝີມືກັບແນວຄວາມຄິດຂອງຄົນຊື່ໆ
17:30 ແລ້ວໃນຍາມກ່ອນ ຕອນທີ່ຄົນເຮົາຍັງບໍ່ຮູ້ຈັກຫຍັງ ເພິ່ນໄດ້ເບິ່ງຂ້າມແນວ
ຄວາມຜິດໄປ ແຕ່ບັດນີ້ເພິ່ນໄດ້ອອກຄຳສັ່ງວ່າ ໃຫ້ຄົນທັງໝົດທົ່ວຄູ່ໝ້ອງໃນໂລກ
ກັບໃຈໃໝ່
17:31 ຍ້ອນວ່າ ເພິ່ນໄດ້ກຳນົດມື້ໜຶ່ງໄວ້ໃນອະນາຄົດ ແລ້ວໃນມື້ນັ້ນ ເພິ່ນຊິໄດ້ຕັດ-
ສິນພິພາກສາຊາວໂລກໂດຍຄວາມທ່ຽງທຳເປັນຫລັກ ໂດຍໄດ້ແຕ່ງຕັ້ງທ່ານຜູ້ໜຶ່ງ
ໄວ້ເປັນຜູ້ພິພາກສາ ກັບເພິ່ນໄດ້ຢືນຢັນຜູ້ນັ້ນໄວ້ຕໍ່ໜ້າໝົດຄູ່ຄົນດ້ວຍວ່າ ເພິ່ນໄດ້
ໂຜດໃຫ້ທ່ານຜູ້ນັ້ນເປັນຂຶ້ນມາຈາກຕາຍ ເປັນຫຼັກຖານ"

17:32 ບັດ ໂປໂລ ເວົ້າແລ້ວ ພວກຄົນຢູ່ນັ້ນພໍໄດ້ຍິນເຖິງເລື່ອງການເປັນຂຶ້ນມາຈາກ
ຕາຍ ມີຜູ້ລາງຄົນກໍເຍາະເຍີ້ຍ ແຕ່ຄົນອື່ນໆ ໄດ້ເວົ້າວ່າ “ເຮົາຢາກຊິຟັງເຈົ້າໃນ
ເລື່ອງນີ້ອີກຕໍ່ໄປ”
17:33 ຫລັງຈາກນັ້ນ ໂປໂລ ໄດ້ອອກຈາກພວກເຂົາໄປ
17:34 ແຕ່ວ່າ ມີຜູ້ຊາຍຜູ້ລາງຄົນໄດ້ຕິດຕາມ ໂປໂລ ໄປກັບໄດ້ຮັບເຊື່ອນຳ ໃນຄົນ
ໝູ່ນັ້ນມີ ດີໂອນີຊີໂອ ຜູ້ເປັນສະມາຊິກສະພາ ອາເຣໂອປາໂກ ກັບໄດ້ມີຍິງຄົນ
ໜຶ່ງຊື່ ດາມາຣີ ພ້ອມກັບຄົນອື່ນໆ ນຳ

## ກິດຈະການ ບົດທີ 18

18:1 ຫລັງຈາກນີ້ແລ້ວ ໂປໂລ ໄດ້ອອກຈາກນະຄອນ ອາແຖນ ໄປຍັງເມືອງ ໂກ-
ຣິນໂທ
18:2 ແລ້ວ ລາວ ໄດ້ຮັບຄົນ ຢິວ ຄົນໜຶ່ງຊື່ ອາກີລາ ຜູ້ທີ່ເກີດໃນແຄວ້ນ ປົນໂຕ
ແລ້ວເຂົາຫາກໍ່ມາຮອດຈາກປະເທດ ອີຕາລີ ພ້ອມກັບເມຍຊື່ ປີຊະກີລາ (ຍ້ອນ
ວ່າເຈົ້າເມືອງ ກະລາວດີໂອ ມີຮັບສັ່ງໃຫ້ພວກຄົນ ຢິວ ຕ້ອງອອກໄປຈາກ ໂຣມ )
ໂປໂລ ກໍເລີຍໄປຫາສອງຜົວເມຍນັ້ນ
18:3 ແລ້ວຍ້ອນວ່າ ໂປໂລ ມີອາຊີບແນວດຽວກັນກັບເຂົາ ລາວ ຈັ່ງພັກອາໄສເຮັດ
ການງານຢູ່ນຳ ຄືເຂົາທັງສອງປະກອບອາຊີບເປັນຊ່າງເຮັດເຕັນ
18:4 ແລ້ວ ໂປໂລ ຈັ່ງໄດ້ເຂົ້າສາລາທຳໃນຄູ່ມື້ຢຸດພັກວັນຊະບາໂຕ ອ້າງເຫດຜົນ
ໂຕ້ຕອບກັນຈູງໃຈທັງພວກ ຊາວຢິວ ກັບພວກຊາວເກຣັກຢູ່ຫັ້ນ
18:5 ແລ້ວພໍແຕ່ ຊີລາ ກັບ ຕີໂມທຽວ ມາຈາກແຄວ້ນ ມາເກໂດເນຍ ໂປໂລ ກໍໄດ້ມີ
ພາລະຈູງໃຈ ຈັ່ງອອກໄປເປັນພະຍານກັບພວກຢິວວ່າ ພຣະເຢຊູ ເປັນ ພຣະ-
ຄຣິດ ພຣະຜູ້ໂຜດທີ່ເຂົາຄອຍຖ້າທ່ານັ້ນ
18:6 ແຕ່ບັດພໍພວກຄົນ ຢິວ ຕັ້ງໂຕເປັນຝ່າຍຕໍ່ຕ້ານກັບໝິ່ນປະມາດໃສ່ ລາວ ໂປ-
ໂລ ຈັ່ງສະບັດເສື້ອຜ້າເຈົ້າຂອງ ເວົ້າໃສ່ພວກເຂົາວ່າ “ໃຫ້ເລືອດຂອງພວກເຈົ້າ
ຕົກໃສ່ຫົວໂຕເອງເດີ້ ຂ້ອຍລ້າງມືແລ້ວ ແຕ່ນີ້ໄປຂ້ອຍຊິໄປຫາຄົນຕ່າງຊາດເດີ້”
18:7 ແລ້ວ ໂປໂລ ຈັ່ງອອກຈາກຫັ້ນໄປ ເຂົ້າເຮືອນຂອງຜູ້ຊາຍຄົນໜຶ່ງຊື່ ຢູສະໂຕ
ເປັນຄົນທີ່ເຊື່ອຖືພຣະເຈົ້າ ຊຶ່ງເຮືອນຂອງເຂົາຕິດກັບສາລາທຳ

18:8 ແລ້ວສ່ວນ ກີສະໂປ ຜູ້ເປັນເຈົ້າໜ້າທີ່ລະດັບສູງຂອງສາລາທຳ ໄດ້ເຊື່ອໃນ
ພຣະຜູ້ເປັນເຈົ້າ ພ້ອມກັບເຮືອນທັງໝົດຂອງ ລາວ ແລ້ວຊາວ ໂກຣິນໂທ ຫລາຍ
ຄົນ ບັດໄດ້ຟັງແລ້ວກໍຮັບເຊື່ອນຳ ແລ້ວຈັ່ງໄດ້ຮັບການຈຸ່ມນໍ້າ
18:9 ແລ້ວພຣະເຈົ້າໄດ້ເວົ້າກັບ ໂປໂລ ທາງນິມິດໃນຄືນມື້ໜຶ່ງ ວ່າ "ຢ່າຊູ່ຢ້ານເລີຍ
ແຕ່ໃຫ້ປ່າວປະກາດຕໍ່ໄປ ບໍ່ໃຫ້ອຳໄວ້ເດີ້
18:10 ຍ້ອນວ່າເຮົາຢູ່ກັບເຈົ້າ ບໍ່ມີໃຜຊິເຮັດຮ້າຍໃສ່ເຈົ້າດອກ ຍ້ອນວ່າເຮົາມີຫລາຍ
ຄົນໃນເມືອງນີ້"
18:11 ໂປໂລ ເລີຍພັກອາໄສຢູ່ນັ້ນຕະຫລອດໜຶ່ງປີຫົກເດືອນ ແລ້ວໄດ້ສອນ ພຣະ-
ຄຳ ຂອງພຣະເຈົ້າໃຫ້ກັບພວກເຂົາ
18:12 ແລ້ວໃນຕອນນັ້ນ ຄາລີໂອ ຂຶ້ນເປັນຜູ້ກວດລາຊະການແຄວ້ນ ອະຂາຢາ
ພວກຢິວໄດ້ລຸກຂຶ້ນພ້ອມກັນ ຕໍ່ຕ້ານ ໂປໂລ ຈັ່ງພາ ລາວ ໄປຂຶ້ນສານ
18:13 ຟ້ອງຮ້ອງກັນວ່າ "ຄົນນີ້ຊັກຊວນຜູ້ຄົນທັງຫລາຍໃຫ້ເຄົາລົບນັບຖືພຣະເຈົ້າ
ໃນທາງທີ່ຜິດກົດບັນຍັດ"
18:14 ບັດ ໂປໂລ ອ້າປາກຊິເວົ້າ ຄາລີໂອ ກໍເວົ້າຂຶ້ນໃສ່ພວກຢິວກ່ອນວ່າ "ໂອ
ພວກຢິວເອີຍ ຄັ່ນເປັນເລື່ອງຄວາມຜິດຄວາມຊົ່ວ ຫລືເປັນເລື່ອງອາດຊະຍາກຳ
ສົມຄວນເຮົາຊິທົນຟັງພວກເຈົ້າຢູ່
18:15 ແຕ່ເປັນເລື່ອງຖ້ອຍຄຳ ກັບຊື່ຄົນ ກັບກົດບັນຍັດຂອງພວກເຈົ້າເອງຊື່ໆ ຈັ່ງ-
ຊັ້ນ ໃຫ້ພວກເຈົ້າພິຈາລະນາເອົາເອງ ໂລດ ເດີ້ ຝ່າຍເຮົາບໍ່ຢາກເປັນຜູ້ຕັດສິນໃນ
ຂໍ້ຄວາມແນວໝູ່ນັ້ນດອກ"
18:16 ເວົ້າແລ້ວ ຄາລີໂອ ຈັ່ງໄລ່ພວກເຂົານັ້ນອອກຈາກສານຕັດສິນ
18:17 ແລ້ວພວກຄົນເກຣັກທັງໝົດຈັ່ງຈັບເອົາ ໂຊຊະເທນ ເຈົ້າໜ້າທີ່ລະດັບສູງ
ຂອງສາລາທຳ ມາຄຶ່ງນຕີທາງໜ້າສານຕັດສິນນັ້ນ ແຕ່ສ່ວນ ຄາລີໂອ ກໍບໍ່ໄດ້
ຫ່ວງເລີຍ
18:18 ແລ້ວ ໂປໂລ ໄດ້ພັກຢູ່ຫັ້ນອີກໂດນເຕີບ ແລ້ວຈັ່ງຂໍລາພວກພີ່ນ້ອງ ລົງເຮືອ
ແລ່ນໄປແຄວ້ນ ຊີເຣຍ ແລ້ວ ປີຊະກີລາ ກັບ ອາກີລາ ໄດ້ໄປນຳ ລາວ ບັດນີ້

ໂປໂລ ຈັ່ງແຖຫົວຢູ່ເມືອງ ເກັນເຂໄອ (ຕາມປະເພນີຂອງ ຊາວຢິວ ) ຍ້ອນວ່າ
ລາວ ໄດ້ຄຳສາບານໂຕຕໍ່ພຣະເຈົ້າ
18:19 ແຕ່ບັດມາຮອດເມືອງ ເອເຟໂຊ ໂປໂລ ໄດ້ປະ ປີຊະກີລາ ກັບ ອາກີລາ ໄວ້
ຢູ່ນັ້ນ ແລ້ວ ລາວ ໄດ້ເຂົ້າໄປໃນສາລາທຳ ອ້າງເຫດຜົນໂຕ້ຕອບກັນກັບພວກຢິວຢູ່
ນັ້ນ
18:20 ແລ້ວບັດຄົນຢູ່ນັ້ນຂໍຮ້ອງໃຫ້ ລາວ ຢູ່ກັບເຂົາອີກຕໍ່ໄປ ລາວກໍບໍ່ຍອມ
18:21 ແຕ່ວ່າ ລາວ ໄດ້ລາເຂົາໄປ ເວົ້າວ່າ “ຂ້ອຍຈຳເປັນຕ້ອງຮັກສາເທດສະການ
ລ້ຽງທີ່ຊິມາຮອດໄວໆ ນີ້ ໃນເມືອງ ເຢຣູຊາເລັມ ແລ້ວຄັ່ນເປັນທີ່ຊອບຂອງພຣະ-
ເຈົ້າ ຂ້ອຍຊິຫລົບມາຫາພວກເຈົ້າອີກ” ເວົ້າແລ້ວ ໂປໂລ ໄດ້ລົງເຮືອໃບແລ່ນ
ອອກຈາກເມືອງ ເອເຟໂຊ ໄປ
18:22 ບັດມາຮອດເມືອງ ກາຍຊາເຣຍ ລາວ ໄດ້ຂຶ້ນໄປທັກທາຍກັນກັບກຸ່ມຜູ້ເຊື່ອຢູ່
ນັ້ນ ແລ້ວຈັ່ງລົງໄປເມືອງ ອັນຕິໂອເຂຍ ຕໍ່
18:23 ບັດຢູ່ຫັ້ນໄດ້ໜ່ອຍໜຶ່ງ ລາວ ຈັ່ງໄປຕະຫລອດທົ່ວແຄວັນ ຄາລາເຕຍ ກັບ
ແຄວັນ ຟີເຄຍ ຕາມລຳດັບ ໄປໜຸນໃຈສົ່ງເສີມກຳລັງພວກລູກສິດໝົດຄູ່ຄົນ
18:24 ແລ້ວມີຄົນ ຢິວ ຄົນໜຶ່ງຊື່ ອາໂປໂລ ເກີດໃນເມືອງ ອາເລັກຊັນເດັຍ ເປັນ
ຄົນມີພົນສະຫວັນທາງການເວົ້າການຈາ ກັບຊຳນານຫລາຍໃນທາງ ພຣະຄຳ ໄດ້
ມາເມືອງ ເອເຟໂຊ
18:25 ອາໂປໂລ ຄົນນີ້ໄດ້ຮັບການອົບຮົມໃນທາງຂອງພຣະເຈົ້າ ກັບມີໃຈຮ້ອນຮົນ
ເອົາໃຈໃສ່ສອນໂດຍລະອຽດໃນເລື່ອງພຣະເຈົ້າ ແມ່ນວ່າເຂົາຮູ້ຈັກແຕ່ເລື່ອງການ
ຮັບການຈຸ່ມນໍ້າຂອງ ໂຢຮັນ ເທົ່ານັ້ນ
18:26 ແລ້ວ ອາໂປໂລ ຈັ່ງຕັ້ງຕົ້ນສອນໃນສາລາທຳໂດຍໃຈກ້າ ແຕ່ບັດ ອາກີລາ
ກັບ ປີຊະກີລາ ໄດ້ຟັງເຂົາແລ້ວ ຈັ່ງຮັບເອົາເຂົາມາສອນໃຫ້ຮູ້ຈັກທາງຂອງພຣະ-
ເຈົ້າໃຫ້ຖືກຕ້ອງຫລາຍຂຶ້ນ
18:27 ແລ້ວບັດ ອາໂປໂລ ວ່າຊິຂ້າມໄປແຄວັນ ອະຂາຢາ ພວກພີ່ນ້ອງກໍຂຽນຈົດໝ
າຍຝາກໄປຮອດລູກສິດຢູ່ນັ້ນ ໃຫ້ຕ້ອນຮັບເອົາ ລາວ ໄວ້ບັດ ລາວ ໄປຮອດ ແລ້ວ
ລາວ ໄດ້ຊ່ອຍຄົນຢູ່ນັ້ນຢ່າງຫລາຍ ທີ່ໄດ້ຮັບເຊື່ອໃນທາງພຣະກະລຸນາທິຄຸນ

18:28 ຄື ລາວ ໄດ້ໂຕ້ຕອບກັບພວກຢິວ ເວົ້າຢ່າງມີນໍ້າໜັກຕາມທີ່ສາທາລະນະ
ໂດຍຍົກຂໍ້ໃນ ພຣະຄໍາ ທີ່ຊີ້ແຈງເຖິງ ພຣະເຢຊູ ວ່າເປັນ ພຣະຄຣິດ ພຣະຜູ້ໂຜດ
ນັ້ນ

# ກິດຈະການ ບົດທີ 19

19:1 ບັດນີ້ ມັນເປັນໄປທີ່ວ່າ ຕອນ ອາໂປໂລ ຍັງຢູ່ໃນເມືອງ ໂກຣິນໂທ ນັ້ນ ໂປໂລ
ພວມເດີນທາງໄປໂດຍໃຊ້ເສັ້ນທາງສາຍເໜືອ ເປັນທາງລັດໄປຍັງເມືອງ ເອເຟ-
ໄຊ ແລ້ວ ລາວ ໄດ້ຮັບກັບລູກສິດລາງຄົນຢູ່ນັ້ນ
19:2 ແລ້ວ ລາວ ຈັ່ງຖາມເຂົາວ່າ “ຕັ້ງແຕ່ພວກເຈົ້າຮັບເຊື່ອນັ້ນ ພວກເຈົ້າໄດ້ຮັບ
ພຣະວິນຍານ ແລ້ວຫລືບໍ່” ເຂົາຕອບ ໂປໂລ ວ່າ “ພວກເຮົາຍັງບໍ່ເຄີຍໄດ້ຍິນຮອດ
ວ່າມີ ພຣະວິນຍານ ”
19:3 ແລ້ວ ໂປໂລ ຈັ່ງຖາມເຂົາວ່າ “ຄັ່ນຈັ່ງຊັ້ນ ພວກເຈົ້າໄດ້ຮັບການຈຸ່ມນໍ້າແນວ
ໃດ?” ເຂົາຕອບວ່າ “ໄດ້ຮັບການຈຸ່ມນໍ້າຂອງ ໂຢຮັນ ”
19:4 ແລ້ວ ໂປໂລ ເວົ້າວ່າ “ ໂຢຮັນ ນັ້ນໃຫ້ຮັບການຈຸ່ມນໍ້າສະແດງເຖິງການກັບໃຈໃ
ໝ່ກໍແມ່ນ ບອກຄົນໃຫ້ເຊື່ອໃນເພິ່ນຜູ້ນັ້ນທີ່ຊິມາຕອນຫລັງ ລາວ ຜູ້ນັ້ນຄື ພຣະ-
ເຢຊູຄຣິດ ”
19:5 ບັດພໍພວກເຂົາໄດ້ຍິນຈັ່ງຊັ້ນ ພວກເຂົາຈັ່ງພາກັນຮັບການຈຸ່ມນໍ້າໃນພຣະ-
ນາມຂອງ ພຣະເຢຊູເຈົ້າ
19:6 ແລ້ວບັດ ໂປໂລ ວາງມືຂອງ ລາວ ເທິງພວກເຂົາ ພຣະວິນຍານ ຂອງພຣະ-
ເຈົ້າຈັ່ງລົງມາປະທັບຢູ່ນໍາເຂົາ ແລ້ວເຂົາໄດ້ເວົ້າພາສາຕ່າງໆ ພ້ອມທັງບັນລະ-
ຍາຍ ພຣະຄໍາ ຂອງພຣະເຈົ້ານໍາ
19:7 ແລ້ວໃນຄົນກຸ່ມນັ້ນມີຜູ້ຊາຍປະມານສິບສອງຄົນ
19:8 ແລ້ວ ໂປໂລ ໄດ້ເຂົ້າໄປໃນສາລາທໍາຢູ່ນັ້ນ ເວົ້າໂດຍໃຈກ້າເປັນເວລາສາມ
ເດືອນ ໂຕ້ຕອບອ້າງເຫດຜົນຊັກຊວນໃຫ້ເຊື່ອຖືໃນເລື່ອງລາຊະອານາຈັກຂອງ-
ພຣະເຈົ້ານັ້ນ
19:9 ແຕ່ຜູ້ລາງຄົນເກີດມີໃຈແຂງກະດ້າງຈັ່ງບໍ່ຍອມເຊື່ອ ແຕ່ໄດ້ເວົ້າໃສ່ຮ້າຍທາສີ
ເຖິງ “ທາງນັ້ນ” ຕໍ່ໜ້າພວກຄົນທັງຫລາຍ ໂປໂລ ຈັ່ງແຍກອອກໄປຈາກພວກເຂົາ

ພາໝູ່ພວກລູກສິດໄປນຳ ແຍກຍ້າຍອອກໄປໂຕ້ຕອບອ້າງເຫດຜົນກັນຄູ່ມື້ໃນ
ໂຮງຮຽນຂອງ ຕີຣາໂນ
19:10 ໄດ້ເຮັດແນວນັ້ນເປັນເວລາສອງປີ ຈົນກວ່າໝົດສູ່ຄົນໃນແຄວ້ນ ເອເຊຍ ນັ້ນ
ໄດ້ຍິນໄດ້ຟັງ ພຣະຄຳ ເຖິງເລື່ອງ ພຣະເຢຊູເຈົ້າ ທັງພວກ ຊາວຢິວ ກັບພວກຊາວ
ເກຣັກນຳ
19:11 ແລ້ວພຣະເຈົ້າໄດ້ສະໜັບສະໜູນໂດຍເຫດການມະຫັດສະຈັນເປັນພິເສດ
ຜ່ານທາງມືຂອງ ໂປໂລ
19:12 ຈົນຂະໜາດ ແມ່ນແຕ່ຄົນໄດ້ນຳເອົາຜ້າເຊັດໜ້າກັບຜ້າກັນເປື້ອນຈາກໂຕ
ໂປໂລ ໄປວາງໃສ່ຄົນເຈັບ ໂລກໄພໄຂ້ເຈັບທີ່ເຂົາເປັນກໍເຊົາເປັນດີ ກັບຜູ້ທີ່ມີຜີ
ຮ້າຍສິງຢູ່ມັນກໍອອກໄປ ໂລດ
19:13 ແຕ່ພວກຢິວຜູ້ລາງຄົນທີ່ພະເນຈອນທ່ຽວໄປເປັນໝໍຜີ ພະຍາຍາມອອກ
ພຣະນາມຂອງ ພຣະເຢຊູເຈົ້າ ລອງຂັບຜີຮ້າຍອອກວ່າ “ເຮົາສັ່ງເຈົ້າໂດຍ ພຣະ-
ເຢຊູ ຜູ້ທີ່ ໂປໂລ ໄດ້ປະກາດນັ້ນ”
19:14 ແລ້ວມີເຈັດຄົນທີ່ໄດ້ເຮັດແນວນັ້ນ ເປັນພວກລູກຊາຍຂອງ ຊະເກວາ ຊຶ່ງ
ເປັນຄະນະຫົວໜ້າປະໂລຫິດຜູ້ໜຶ່ງ
19:15 ຝ່າຍຜີຮ້າຍນັ້ນຈັ່ງຕອບເຂົາວ່າ “ ພຣະເຢຊູ ຂ້າກໍຮູ້ຈັກ ກັບ ໂປໂລ ຂ້າກໍຮູ້-
ຈັກນຳ ແຕ່ພວກເຈົ້າແມ່ນໃຜສັ່ນ”
19:16 ບັດນີ້ ຄົນຜູ້ນັ້ນທີ່ມີຜີຮ້າຍສິງຈັ່ງລຸກຂຶ້ນ ໂດດໃສ່ຄົນທັງເຈັດນັ້ນ ເອົາຊະນະ
ພວກເຂົາດ້ວຍລິດກຳລັງເໜືອກວ່າ ພວກເຂົາເລີຍແລ່ນໜີອອກຈາກເຮືອນ ທັງ
ເປືອຍໂຕທັງບາດເຈັບ
19:17 ເລື່ອງນັ້ນໄດ້ລືກັນໄປເຖິງຫູໝົດຄູ່ຄົນທີ່ຢູ່ໃນເມືອງ ເອເຟໂຊ ທັງພວກຄົນ
ຢິວ ກັບພວກຄົນເກຣັກນຳ ຈົນໝົດຄູ່ຄົນກໍພາກັນຕົກໃຈຢ້ານ ແລ້ວພຣະນາມ
ຂອງພຣະເຢຊູຄຣິດເຈົ້າກໍເປັນທີ່ຍົກຍ້ອງສັນລະເສີນ
19:18 ແລ້ວຫລາຍຄົນທີ່ຮັບເຊື່ອຈັ່ງໄດ້ມາສາລະພາບ ກັບເປີດເຜີຍເຖິງການບາບ
ແນວບໍ່ດີຂອງເຂົາທີ່ເຮັດນັ້ນ

19:19 ກັບມີຫລາຍຄົນທີ່ເຄີຍໃຊ້ເວດມົນຄາຖາ ໄດ້ເອົາຕຳລາຂອງໂຕມາເຜົາໄຟ
ຖິ້ມຕໍ່ໜ້າຕໍ່ຕາໝົດຄູ່ຄົນ ຕຳລາໝູ່ນັ້ນຄິດເປັນລາຄາຕັ້ງຫ້າໝື່ນຫລຽນເງິນ
19:20 ພຣະຄຳ ຂອງພຣະເຈົ້າຈັ່ງເກີດຜົນຈະເລີນຂຶ້ນ ມີອຳນາດເໜືອຄູ່ຢ່າງ
19:21 ຫລັງຈາກເລື່ອງນີ້ໄດ້ຜ່ານໄປແລ້ວ ໂປໂລ ໄດ້ຕັ້ງໃຈໂດຍການຊົງນຳຂອງ
ພຣະວິນຍານ ວ່າ ຫລັງຈາກເຮົາໄປ ມາເກໂດເນຍ ກັບ ອະຂາຢາ ແລ້ວ ເຮົາຊິໄດ້
ໄປເມືອງ ເຢຣູຊາເລັມ ຈັ່ງເວົ້າວ່າ “ບັດຂ້ອຍໄປໜ້ອງນັ້ນແລ້ວ ຂ້ອຍຊິຕ້ອງໄປ
ເຫັນ ໂຣມ ນຳ”
19:22 ຈັ່ງຊັ້ນ ລາວ ເລີຍໃຊ້ສອງຄົນນັ້ນທີ່ໄດ້ຊ່ອຍຮັບໃຊ້ ລາວ ຄື ຕີໂມທຽວ ກັບ
ເອຣະຊະໂຕ ໃຫ້ໄປແຄວ້ນ ມາເກໂດເນຍ ແຕ່ສ່ວນ ລາວ ນັ້ນກໍໄດ້ພັກຢູ່ໃນ
ແຄວ້ນ ເອເຊຍ ໜ່ອຍໜຶ່ງ
19:23 ແລ້ວໃນຍາມນັ້ນ ໄດ້ເກີດມີການວຸ້ນວາຍບໍ່ນ້ອຍຂຶ້ນມາ ຍ້ອນຂ່າວດີເລື່ອງ
ພຣະເຢຊູ ທີ່ຄົນເອີ້ນກັນວ່າ “ທາງນັ້ນ”
19:24 ຄືມີຜູ້ຊາຍຄົນໜຶ່ງຊື່ ເດເມທີໂອ ຢູ່ຫັ້ນ ມີອາຊີບເປັນຊ່າງຕີເງິນເຮັດເປັນ
ສານໄຫວ້ເຈົ້າແມ່ ພະອາເຕມິດ ແລ້ວອາຊີບນັ້ນເຮັດໃຫ້ພວກຊ່າງນັ້ນມີລາຍໄດ້
ບໍ່ນ້ອຍ
19:25 ເດເມທີໂອ ເລີຍເອີ້ນໝູ່ພວກອາຊີບຊ່າງເງິນນັ້ນ ມາຮ່ວມຊຸມກັນແລ້ວເວົ້າ
ວ່າ “ພວກເຈົ້າຮູ້ຢູ່ແລ້ວວ່າ ພວກເຮົາໄດ້ລ້ຽງຊີບຢູ່ດີກິນດີກໍຍ້ອນສານເຈົ້າແມ່ ພະ-
ອາເຕມິດ ນີ້ເນາະ
19:26 ບັດນີ້ ພວກເຈົ້າໄດ້ຍິນໄດ້ເຫັນວ່າ ບໍ່ວ່າແຕ່ຢູ່ໃນເມືອງ ເອເຟໂຊ ນີ້ເມືອງດຽວ
ແຕ່ເກືອບທົ່ວແຄວ້ນ ເອເຊຍ ນຳ ໂປໂລ ຄົນນີ້ໄດ້ຊັກຊວນຄົນຫລວງຫລາຍໃຫ້
ເຊົາຖືໃນທາງເກົ່າ ຫາວ່າພະທີ່ເຮັດໂດຍມືຄົນບໍ່ແມ່ນພຣະແທ້
19:27 ຈັ່ງຊັ້ນ ດີບໍ່ດີບໍ່ແມ່ນແຕ່ອາຊີບຂອງເຮົາຊິເສຍຫາຍໄປແຕ່ຢ່າງດຽວ ແຕ່
ພຣະວິຫານຂອງເຈົ້າແມ່ ພະອາເຕມິດ ຜູ້ຍິ່ງໃຫຍ່ນັ້ນ ຊິກາຍເປັນທີ່ລົບຫລູ່ໝິ່ນ-
ປະມາດ ຈົນສັກສີຂອງເທບທິດານັ້ນທີ່ເປັນທີ່ນັບຖືຂອງໝົດແຄວ້ນ ເອເຊຍ ພ້ອມ
ທັງໂລກນຳ ຊິເສື່ອມເສຍລົງໄປໃຫ້ໝົດ”

19:28 ບັດຄົນທັງຫລາຍໄດ້ຍິນຈັ່ງຊັ້ນ ຕ່າງກໍຄຽດແຄ້ນຮ້າຍຢ່າງໃຫຍ່ຮ້ອງກັນວ່າ “
ພະອາເຕມິດ ຂອງຊາວ ເອເຟໂຊ ເປັນໃຫຍ່ຍິ່ງໆ”
19:29 ແລ້ວໄດ້ເກີດການວຸ້ນວາຍຫຍຸ້ງກັນໃຫຍ່ທົ່ວທັງເມືອງ ຈົນພວກຄົນຢູ່ຫັ້ນໄດ້
ລຸກຂຶ້ນເຂົ້າໄປໃນໂຮງລະຄອນ ໂດຍໄດ້ຈັບເອົາ ຄາໂຢ ກັບ ອາຣິຊະຕາໂຂ
ຊາວ ມາເກໂດເນຍ ໝູ່ເດີນທາງຂອງ ໂປໂລ ນັ້ນ ລາກເຂົ້າໄປນຳ
19:30 ແລ້ວບັດ ໂປໂລ ວ່າຊິເຂົ້າໄປຫາຄົນພວກນັ້ນ ພວກລູກສິດຫ້າມໄວ້ບໍ່ຍອມ
ໃຫ້ ລາວ ເຂົ້າໄປ
19:31 ແລ້ວມີຫົວໜ້າຜູ້ລາງຄົນປະຈຳແຄວ້ນ ເອເຊຍ ທີ່ເປັນໝູ່ກັນກັບ ໂປໂລ ໄດ້
ໃຊ້ຄົນໄປຫາ ໂປໂລ ວິງວອນຂໍບໍ່ໃຫ້ ລາວ ເຂົ້າໄປໃນໂຮງນັ້ນນຳ
19:32 ຜູ້ລາງຄົນຢູ່ໃນຫັ້ນໄດ້ຮ້ອງຈັ່ງຊີ້ ແລ້ວອີກຜູ້ລາງຄົນຮ້ອງຈັ່ງຊັ້ນ ຍ້ອນວ່າທີ່
ນັ້ນກໍວຸ້ນວາຍຫລາຍ ກັບດີບໍ່ດີຄົນສ່ວນຫລາຍບໍ່ຮູ້ເລີຍວ່າເຂົາໄດ້ເຂົ້າໄປຕຸ້ມ-
ໂຮມກັນຍ້ອນເລື່ອງອີຫຍັງ
19:33 ແລ້ວພວກຢິວຜູ້ລາງຄົນໄດ້ຂັບໄລ່ດັນນາຍ ອາເລັກຊັນໂດ ໃຫ້ຂຶ້ນໄປຂ້າງ
ໜ້າ ອາເລັກຊັນໂດ ຈັ່ງແກວ່ງມືໝາຍວ່າຊິເວົ້າແກ້ຂໍ້ຫາຕໍ່ໜ້າໝົດຄູ່ຄົນ
19:34 ແຕ່ບັດຄົນຢູ່ຫັ້ນຮູ້ວ່າ ລາວ ເປັນຄົນ ຢິວ ເຂົາກໍແຮງສິ່ງສຽງໂຫ່ຮ້ອງພ້ອມກັນ
ເປັນເວລາປະມານສອງຊົ່ວໂມງເຕັມ ວ່າ “ເຈົ້າແມ່ ພະອາເຕມິດ ຂອງຊາວ ເອເຟ-
ໂຊ ເປັນໃຫຍ່ໆ”
19:35 ແລ້ວບັດເຈົ້າໜ້າທີ່ນາຍທະບຽນ ໄດ້ອອຍເອົາປະຊາຊົນໃຫ້ງຽບສະຫງົບລົງ
ແລ້ວ ເຂົາຈັ່ງເວົ້າວ່າ “ທ່ານຊາວເມືອງ ເອເຟໂຊ ທັງຫລາຍເອີຍ ມີໃຜແໜ່ທີ່ບໍ່ຮູ້
ວ່າ ເມືອງ ເອເຟໂຊ ຂອງເຮົານີ້ເປັນເມືອງທີ່ເຊື່ອຖືເຈົ້າແມ່ ພະອາເຕມິດ ຜູ້ຍິ່ງ-
ໃຫຍ່ນັ້ນ ພ້ອມກັບຮູບຈຳລອງຂອງເພິ່ນທີ່ຕົກລົງມາຈາກດາວ ພະຫັດ ຢູ່ເທິງຟ້າ
ນັ້ນ
19:36 ຈັ່ງຊັ້ນ ຂໍ້ຄວາມຈິງນີ້ ບໍ່ມີໃຜສາມາດໂຕ້ຖຽງຫລືປະຕິເສດໄດ້ ພວກເຈົ້າຄວນ
ຊິນິ່ງລົງຄວບຄຸມອາລົມຊະ ຢ່າສູ່ເຮັດຫຍັງໃຈຮ້ອນໄປເລີຍເດີ້
19:37 ຄືພວກເຈົ້າໄດ້ພາຄົນໝູ່ນີ້ມາ ທີ່ບໍ່ໄດ້ປຸ້ນພຣະວິຫານຫລືເວົ້າລົບຫລູ່ດູໝິ່ນ
ເຈົ້າແມ່ຂອງພວກເຈົ້າດອກ

19:38 ຈັ່ງຊັ້ນ ຄັ້ນແມ່ນ ເດເມທີໂອ ກັບພວກຊ່າງທີ່ມີອາຊີບຢ່າງດຽວກັນ ຄັ້ນມີ
ເລື່ອງອິຫຍັງກັບຜູ້ໃດ ສານທີ່ຊິເວົ້າຄວາມກໍມີເປີດຢູ່ ຜູ້ກວດການກໍມີ ຜູ້ພິພາກສາ
ກໍມີນໍາ ໃຫ້ເຂົາມາຟ້ອງຮ້ອງກັນຢ່າງຖືກຕ້ອງເຖີ
19:39 ແຕ່ຄັ້ນແມ່ນພວກເຈົ້າມີຂໍ້ຫາອິຫຍັງອີກ ກໍໃຫ້ຊໍາລະກັນໃນສະພາຢ່າງເປັນ
ລະບຽບຕາມກົດໝາຍ
19:40 ຄືຍ້ອນເລື່ອງທີ່ເກີດຂຶ້ນມື້ນີ້ ອາດ ເປັນເຫດທີ່ເຮົາຊິຕ້ອງຣາຍງານໂຕຕໍ່ເຈົ້າ-
ໜ້າທີ່ຝ່າຍສູງຍ້ອນການຊຸມນຸມວຸ້ນວາຍນີ້ເອງ"
19:41 ບັດເວົ້າຈັ່ງຊັ້ນຈົບແລ້ວ ນາຍທະບຽນຈັ່ງສັ່ງໃຫ້ຄົນແຍກຍ້າຍກັນອອກໄປ

## ກິດຈະການ ບົດທີ 20

20:1 ຫລັງຈາກການວຸ້ນວາຍນັ້ນສະຫງົບລົງແລ້ວ ໂປໂລ ຈັ່ງເອີ້ນພວກລູກສິດໃຫ້
ມາຫາ ລາວ ບັດກອດທັກທາຍກັນໜຸນນໍ້າໃຈພວກເຂົາ ລາວ ຈັ່ງລາໄປຍັງ
ແຄວ້ນ ມາເກໂດເນຍ
20:2 ບັດເດີນທາງຜ່ານແຄວ້ນນັ້ນໄປແລ້ວ ກັບໄດ້ໜຸນນໍ້າໃຈພີ່ນ້ອງຢູ່ຫັ້ນຢ່າງ
ຫລາຍແລ້ວ ລາວກໍມາຮອດປະເທດເກຣັກ
20:3 ແລ້ວ ລາວ ໄດ້ພັກຢູ່ນັ້ນສາມເດືອນ ແລ້ວບັດພໍ ລາວ ໝາຍຊິລົງເຮືອອອກໄປ
ແຄວ້ນ ຊີເຣຍ ພວກຢິວກໍຄິດຮ້າຍຖ້າແອບຈອບ ລາວ ລາວ ຈັ່ງຫລົບເມືອໄປ
ທາງແຄວ້ນ ມາເກໂດເນຍ
20:4 ແລ້ວຄົນທີ່ໄປແຄວ້ນ ເອເຊຍ ກັບ ໂປໂລ ນັ້ນ(ມີເຈັດຄົນ) ຄື ໂຊປາເຕ ຊາວ-
ເມືອງ ເບໂຣຢາ ກັບ ອາຣິຊະຕາໂຂ ກັບ ເຊກຸນໂດ ຊາວເມືອງ ເທຊະໂລນິກ
ກັບ ຄາໂຍ ຊາວເມືອງ ເດຣະບາ ກັບ ຕີໂມທຽວ ກັບ ຕີຂີໂກ ພ້ອມທັງ ໂທຟີໂມ
ຊາວແຄວ້ນ ເອເຊຍ ນໍາ
20:5 ຄົນໝູ່ນັ້ນໄດ້ອອກເດີນທາງໄປກ່ອນ ແລ້ວຈັ່ງຄອຍຖ້າພວກເຮົາຢູ່ເມືອງ ໂທ-
ອາດ
20:6 ແລ້ວຫລັງຈາກມື້ເທດສະການເຂົ້າຈີ່ຂາດເຊື້ອຈົບລົງ ພວກເຮົາຈັ່ງລົງເຮືອ
ອອກໄປຈາກເມືອງ ຟີລິບປອຍ ຕໍ່ມາອີກຫ້າມື້ກໍໄດ້ຮັບກັບພວກພີ່ນ້ອງຢູ່ເມືອງ
ໂທອາດ ແລ້ວຈັ່ງພັກຢູ່ຫັ້ນເຈັດມື້

20:7 ແລ້ວໃນມື້ຕົ້ນອາທິດບັດພວກລູກສິດໄດ້ມາໂຮມກັນຫັກເຂົ້າຈີ່ສະຫລອງພິທີ
ມະຫາສະນິດ ໂປໂລ ກໍສັ່ງສອນເຂົາ ເປັນມື້ກ່ອນທີ່ ລາວ ຊິລາຈາກເຂົາໄປ ລາວ
ຈັ່ງເວົ້າຍືດຍາວຈົນກວ່າຮອດທ່ຽງຄືນ
20:8 ແລ້ວກໍມີຕະກຽງໄຕ້ໄວ້ຫລາຍດວງໃນຫ້ອງຊັ້ນເທິງນັ້ນທີ່ເຂົາຕຸ້ມໂຮມກັນຢູ່
20:9 ແລ້ວມີຜູ້ຊາຍໜຸ່ມຄົນໜຶ່ງຊື່ ຢູຕີໂຂ ນັ່ງຢູ່ຂອບໜ້າຕ່າງ ພວມງ້ວງນອນ
ຫລາຍ ແລ້ວຕອນ ໂປໂລ ພວມສອນດົນນານນັ້ນ ຜູ້ຊາຍໜຸ່ມຄົນນັ້ນກໍໂຫງ່ຍຕົກ
ລົງມາຈາກໜ້າຕ່າງຊັ້ນທີ່ສາມ ບັດຄົນອຸ້ມຂຶ້ນກໍເຫັນວ່າຕາຍແລ້ວ
20:10 ໂປໂລ ເລີຍລົງໄປ ກົ້ມລົງກອດຜູ້ຊາຍໜຸ່ມນັ້ນໄວ້ ແລ້ວບອກພີ່ນ້ອງວ່າ “ຢ່າ
ຕົກໃຈເລີຍ ຍ້ອນວ່າຍັງມີຊີວິດຢູ່ໃນໂຕເຂົາ”
20:11 ບັດ ໂປໂລ ຂຶ້ນໄປຫ້ອງຊັ້ນເທິງແລ້ວຫັກເຂົ້າຈີ່ກິນ ແລ້ວກໍຊຸມກັນຕໍ່ໄປອີກ
ດົນນານຈົນຊອດແຈ້ງ ລາວກໍເລີຍລາຈາກເຂົາໄປ
20:12 ແລ້ວພວກພີ່ນ້ອງຈັ່ງພາຜູ້ຊາຍໜຸ່ມຄົນນັ້ນທີ່ຍັງມີຊີວິດຢູ່ເມືອບ້ານໄປ ກັບຮູ້-
ສຶກສະບາຍອົກສະບາຍໃຈບໍ່ນ້ອຍເລີຍ
20:13 ແລ້ວຝ່າຍພວກເຮົາກໍລົງເຮືອແລ່ນໄປເມືອງ ອາໂຊ ຕັ້ງໃຈວ່າຊິຖ້າຮັບ ໂປ-
ໂລ ຢູ່ນັ້ນ ຕາມທີ່ ລາວ ໄດ້ສັ່ງໄວ້ ຍ້ອນ ລາວ ໝາຍໄວ້ວ່າຊິໄປທາງບົກ
20:14 ບັດ ລາວ ໄດ້ໄປພໍ້ກັບພວກເຮົາຢູ່ເມືອງ ອາໂຊ ແລ້ວນັ້ນ ພວກເຮົາກໍຮັບເອົາ
ລາວ ແລ້ວຈັ່ງແລ່ນມາຍັງເມືອງ ມີຕີເລເນ
20:15 ບັດແລ່ນເຮືອອອກຈາກໝ້ອງນັ້ນໄປ ພໍມື້ໃໝ່ມາກໍຜ່ານໄປກົງກັນຂ້າມເກາະ
ຂີໂອ ມື້ທີ່ສອງມາກໍໄດ້ຮອດເກາະ ຊາໂມ ແລ້ວໄດ້ພັກຢູ່ທີ່ແຫລມ ໂຕກິລຽມ
ແລ້ວມາອີກມື້ໜຶ່ງພວກເຮົາໄດ້ມາຮອດເມືອງ ມີເລໂຕ
20:16 ຄື ໂປໂລ ໄດ້ຕັດສິນວ່າຊິແລ່ນເລີຍເມືອງ ເອເຟໂຊ ໄປກ່ອນ ເພື່ອຊິບໍ່ຕ້ອງ
ຄ້າງຢູ່ດົນນານໃນແຄວ້ນ ເອເຊຍ ຍ້ອນ ລາວ ຢາກຟ້າວໄປເມືອງ ເຢຣູຊາເລັມ
ຄັ່ນເປັນໄດ້ ໃຫ້ທັນມື້ເທດສະການ ເພັນເຕຄໍສະເຕ ນັ້ນ
20:17 ແລ້ວຈາກເມືອງ ມີເລໂຕ ນັ້ນ ໂປໂລ ໄດ້ໃຊ້ຄົນໄປເມືອງ ເອເຟໂຊ ເຊີນ
ພວກຜູ້ຫລັກຜູ້ໃຫຍ່ໃນກຸ່ມຜູ້ເຊື່ອນັ້ນໃຫ້ມາຫາ ລາວ

20:18 ພໍພວກເຂົາມາຫາ ໂປໂລ ແລ້ວ ລາວ ຈັ່ງເວົ້າກັບເຂົາວ່າ "ພວກເຈົ້າຮູ້ດີຢູ່ວ່າ
ຂ້ອຍໄດ້ໃຊ້ຊີວິດຕໍ່ເຈົ້າຈັ່ງໃດຕັ້ງແຕ່ມື້ທຳອິດທີ່ຂ້ອຍເຂົ້າມາໃນແຄວ້ນ ເອເຊຍ
20:19 ຄືຂ້ອຍໄດ້ຮັບໃຊ້ພຣະຜູ້ເປັນເຈົ້າໂດຍຄວາມຖ່ອມໃຈ ໂດຍນ້ຳຕາໄຫລ ກັບ
ໂດຍການຖືກທົດລອງນຳ ທີ່ໄດ້ຕົກມາສູ່ໂຕຂ້ອຍຢ່າງຫລາຍ ໂດຍທາງແຜນການ
ຂອງພວກຢິວທີ່ຖ້າຈອບຢູ່
20:20 ແລ້ວຂ້ອຍກໍບໍ່ໄດ້ອຳອິຫຍັງທີ່ເປັນປະໂຫຍດໄວ້ຈາກພວກເຈົ້າຈັກແນວເລີຍ
ແຕ່ໄດ້ຊີ້ແຈງໃຫ້ຮູ້ໃຫ້ເຫັນ ກັບໄດ້ສອນພວກເຈົ້າຢ່າງເປີດເຜີຍໃນທີ່ສາທາລະນະ
ກັບຕາມບ້ານຕາມເຮືອນນຳ
20:21 ທັງເປັນພະຍານຕໍ່ພວກຢິວກັບຕໍ່ພວກເກຣັກນຳ ເຖິງການປ່ຽນໃຈໃໝ່ຕໍ່
ພຣະເຈົ້າ ກັບການເຊື່ອວາງໃຈຕໍ່ພຣະເຢຊູຄຣິດເຈົ້າ
20:22 ນີ້ແຫລະ ບັດນີ້ ພຣະວິນຍານ ຜູກພັນຂ້ອຍໄວ້ ຈັ່ງຈຳເປັນຊິຕ້ອງໄປເມືອງ
ເຢຣູຊາເລັມ ໂດຍບໍ່ຮູ້ວ່າຊິມີອິຫຍັງເກີດຂຶ້ນກັບຂ້ອຍແໜ່ຢູ່ນັ້ນ
20:23 ຮູ້ແຕ່ວ່າ ພຣະວິນຍານ ໄດ້ເປັນພະຍານໃນຄູ່ບ້ານຄູ່ເມືອງວ່າ ເຄື່ອງຈອງຈຳ
ກັບຄວາມຍາກລຳບາກພວມຄອຍຖ້າຂ້ອຍຢູ່ຫັ້ນ
20:24 ແຕ່ວ່າແນວໝູ່ນີ້ບໍ່ໄດ້ເຮັດໃຫ້ຂ້ອຍສະດຸ້ງເລີຍ ຄືຂ້ອຍບໍ່ໄດ້ແພງຊີວິດໄວ້
ເພື່ອຊິໄດ້ມຸ້ງເຂົ້າສູ່ເສັ້ນໄຊຂອງຂ້ອຍໂດຍຄວາມດີອົກດີໃຈ ກັບເພື່ອຊິຮັບໃຊ້
ໜ້າທີ່ການງານຂອງຂ້ອຍນັ້ນ ທີ່ ພຣະເຢຊູເຈົ້າ ໄດ້ມອບໝາຍໄວ້ໃຫ້ ຄືການຢືນ-
ຢັນເຖິງຂ່າວປະເສີດເລື່ອງພຣະກະລຸນາທິຄຸນຂອງພຣະເຈົ້ານັ້ນ
20:25 ນີ້ແຫລະ ບັດນີ້ຂ້ອຍຮູ້ຢູ່ແລ້ວວ່າພວກເຈົ້າຊຶ່ງເປັນຜູ້ທີ່ຂ້ອຍເຄີຍປະກາດລາ-
ຊະອານາຈັກຂອງພຣະເຈົ້ານຳ ຊິບໍ່ໄດ້ເຫັນໜ້າຂ້ອຍອີກເລີຍ
20:26 ຈັ່ງຊັ້ນ ຂ້ອຍສາມາດຢືນຢັນໃນມື້ນີ້ໄດ້ວ່າ ໃຈຂອງຂ້ອຍບໍລິສຸດຈາກເລືອດ
ຂອງໝົດຄູ່ຄົນເລີຍ
20:27 ຍ້ອນວ່າ ຂ້ອຍບໍ່ເຄີຍອຳອິຫຍັງໄວ້ຈາກພວກເຈົ້າເລີຍ ແຕ່ໄດ້ປະກາດແຜນ-
ການຂອງພຣະເຈົ້າທັງໝົດໃຫ້ພວກເຈົ້າຟັງ

20:28 ຈັ່ງຊັ້ນ ໃຫ້ພວກເຈົ້າລະວັງໂຕໃຫ້ດີເດີ້ ຮັກສາຝູງແກະທີ່ ພຣະວິນຍານ ໄດ້
ຕັ້ງເຈົ້າໄວ້ໃຫ້ເປັນຜູ້ເບິ່ງແຍງ ຄືໃຫ້ລ້ຽງກຸ່ມຜູ້ເຊື່ອຂອງພຣະເຈົ້ານັ້ນໄວ້ ທີ່ ພຣະ-
ເຢຊູຄຣິດ ໄດ້ໄຖ່ໂດຍພຣະໂລຫິດຂອງເພິ່ນ
20:29 ຄືຂ້ອຍຮູ້ຢູ່ແລ້ວວ່າ ບັດຂ້ອຍຈາກໄປແລ້ວ ຊິມີໝາປ່າອັນຮ້າຍກາດເຂົ້າມາ
ໃນໝູ່ພວກເຈົ້າ ແລ້ວຊິບໍ່ລະເວັ້ນຝູງແກະນັ້ນໄວ້ເລີຍ
20:30 ແລ້ວຊິມີຜູ້ລາງຄົນໃນໝູ່ພວກເຈົ້າເອງຂຶ້ນມາ ທີ່ຊິບິດເບືອນຄວາມຈິງ ເພື່ອ
ຊັກຊວນພວກລູກສິດໃຫ້ຫລົງຕາມເຂົາໄປ
20:31 ຈັ່ງຊັ້ນ ໃຫ້ຕື່ນໂຕໄວ້ເດີ້ ຈື່ໄວ້ໃຫ້ດີວ່າ ຂ້ອຍໄດ້ເຕືອນສະຕິພວກເຈົ້າຄູ່ຄືນ
ໂດຍນໍ້າຕາໄຫລ ທັງກາງເວັນກາງຄືນ ຕະຫລອດເວລາສາມປີເຕັມບໍ່ໄດ້ຢັບຢັ້ງ
ເລີຍ
20:32 ແລ້ວບັດນີ້ ພີ່ນ້ອງເອີຍ ຂ້ອຍຂໍຝາກພວກເຈົ້າໄວ້ກັບພຣະເຈົ້າ ກັບ ພຣະຄໍາ
ອັນປະກອບດ້ວຍພຣະກະລຸນາທິຄຸນຂອງເພິ່ນນໍາ ຊຶ່ງສາມາດທີ່ຊິກໍ່ຮ່າງສ້າງ
ພວກເຈົ້າຂຶ້ນໃຫ້ແຂງແຮງດີ ກັບ ໂຜດໃຫ້ມີມໍລະດົກ ຮ່ວມກັບຜູ້ບໍລິສຸດຂອງເພິ່ນຜູ້
ອື່ນໆ ນໍາ
20:33 ແລ້ວໃຫ້ຮູ້ກັນວ່າ ຂ້ອຍນີ້ບໍ່ເຄີຍໂລບເງິນຫລືທອງຫລືເສື້ອຜ້າໜ້າແພຂອງ
ຜູ້ໃດເລີຍ
20:34 ເອີ້ ພວກເຈົ້າຮູ້ກັນວ່າ ມືຂອງຂ້ອຍນີ້ໄດ້ຈັດຫາແນວລ້ຽງໂຕເອງພ້ອມທັງລ້ຽງ
ຄົນທີ່ຢູ່ກັບຂ້ອຍນັ້ນນໍາ
20:35 ຄືຊີວິດຂອງຂ້ອຍນີ້ເປັນແບບຢ່າງໃຫ້ເຫັນໃນຄູ່ຢ່າງ ວ່າໃນການເຮັດວຽກ
ຄວນຊິຊ່ອຍລ້ຽງຄົນທີ່ມີກໍາລັງນ້ອຍກວ່າ ຄືໃຫ້ຄຶດເຫັນ ພຣະຄໍາ ຂອງພຣະເຢຊູ-
ຄຣິດເຈົ້າ ທີ່ເພິ່ນໄດ້ເວົ້າວ່າ 'ການໃຫ້ເປັນເຫດໃຫ້ໄດ້ພົບເປັນສຸກຫລາຍກວ່າ
ການຮັບ'"
20:36 ບັດເວົ້າຈັ່ງຊັ້ນແລ້ວ ໂປໂລ ຈັ່ງຄຸກເຂົ່າລົງອະທິຖານເວົ້ານໍາພຣະເຈົ້າຢູ່ນໍາ
ພີ່ນ້ອງຢູ່ຫັ້ນຄູ່ຄົນ
20:37 ແລ້ວພວກເຂົາຈັ່ງຮ້ອງໄຫ້ຢ່າງໃຫຍ່ ກັບກອດຈູບຄໍຂອງ ໂປໂລ ນໍາ

20:38 ເປັນທຸກກວ່າຢ່າງອື່ນຍ້ອນຖ້ອຍຄຳທີ່ ລາວ ເວົ້ານັ້ນ ວ່າພວກເຂົາຊິບໍ່ໄດ້ເຫັນ
ໜ້າ ລາວ ອີກເລີຍ ແລ້ວພວກເຂົາກໍພາ ລາວ ໄປສົ່ງທີ່ເຮືອ

# ກິດຈະການ ບົດທີ 21

21:1 ຕໍ່ມາ ມັນເປັນໄປທີ່ວ່າ ຫລັງຈາກພວກເຮົາລາພວກເຂົາໝູ່ນັ້ນແລ້ວກໍແລ່ນ
ເຮືອກົງໄປເກາະ ໂກດ ແລ້ວອີກມື້ໜຶ່ງກໍມາຮອດເກາະ ໂຣໂດ ບັດອອກຈາກຫັ້ນ
ກໍມາຮອດເມືອງ ປາຕາຣາ
21:2 ແລ້ວພວກເຮົາໄດ້ຮັບເຮືອລຳໜຶ່ງທີ່ພວມຊິແລ່ນໄປເມືອງ ຟອຍນີເກ ແລ້ວ
ພວກເຮົາຈັ່ງລົງເຮືອລຳນັ້ນແລ່ນຕໍ່ໄປ
21:3 ແລ້ວພໍໄດ້ເຫັນເກາະ ກຸບໂຣ ພວກເຮົາໄດ້ຜ່ານເກາະນັ້ນໄປທາງຂວາ ແລ່ນ
ໄປແຄວັນ ຊີເຣຍ ແລ້ວຈັ່ງຈອດເຮືອຢູ່ທ່າເມືອງ ຕີເຣ ຍ້ອນຊິເອົາຂອງບັນທຸກຂຶ້ນ
ຢູ່ທ່ານັ້ນ
21:4 ບັດໄດ້ຮັບພວກລູກສິດຢູ່ຫັ້ນແລ້ວ ເຮົາໄດ້ພັກຢູ່ກັບເຂົາເຈັດມື້ ແລ້ວລູກສິດຢູ່
ນັ້ນໄດ້ເຕືອນ ໂປໂລ ໂດຍທາງ ພຣະວິນຍານ ວ່າ ບໍ່ຄວນຂຶ້ນໄປຍັງເມືອງ ເຢຣູ-
ຊາເລັມ
21:5 ແລ້ວບັດເຈັດມື້ນັ້ນຜ່ານໄປແລ້ວພວກເຮົາກໍລາຈາກໄປ ແລ້ວພວກລູກສິດ
ພ້ອມທັງເມຍກັບລູກໆ ຂອງເຂົາໄດ້ໄປສົ່ງພວກເຮົາອອກຈາກເມືອງໄປ ແລ້ວ
ພວກເຮົາທັງຫລາຍກໍໄດ້ຄຸກເຂົ່າລົງອະທິຖານນຳກັນຢູ່ຫາດຊາຍ
21:6 ບັດລາກັນແລະກັນແລ້ວ ພວກເຮົາໄດ້ລົງເຮືອ ແລ້ວພວກເຂົາຈັ່ງຫລັບເມືອ
ເຮືອນ
21:7 ບັດພວກເຮົາແລ່ນເຮືອມາແຕ່ເມືອງ ຕີເຣ ໄປຮອດເມືອງ ປະໂຕເລມາຍ ແລ້ວ
ກໍໝົດໄປທາງທະເລ ເລີຍຂຶ້ນໄປທາງບົກຕໍ່ ແລ້ວຈັ່ງທັກທາຍກັນກັບພວກພີ່ນ້ອງ
ຢູ່ເມືອງນັ້ນ ຈັ່ງໄດ້ພັກຢູ່ກັບເຂົາຄືນດຽວ
21:8 ບັດຮອດມື້ອື່ນເຊົ້າມາ ພວກເຮົາທີ່ເປັນໝູ່ເດີນທາງພ້ອມກັບ ໂປໂລ ກໍລາໄປ
ແລ້ວໄດ້ເດີນທາງມາຮອດເມືອງ ກາຍຊາເຣຍ ຈັ່ງໄດ້ເຂົ້າໄປໃນເຮືອນຂອງ ຟີ-
ລິບ ຜູ້ເປັນຜູ້ປະກາດຂ່າວປະເສີດ ທີ່ເປັນຄົນໜຶ່ງໃນພວກເຈັດຄົນນັ້ນ

21:9 ຟີລິບ ນີ້ມີລູກສາວພົມມະຈາລີສີ່ຄົນ ເຂົາທັງສີ່ນີ້ໄດ້ເປັນຜູ້ບັນລະຍາຍ ພຣະ-
ຄຳ
21:10 ບັດພວກເຮົາພັກຢູ່ນັ້ນຫລາຍມື້ແລ້ວ ໄດ້ມີຜູ້ບັນລະຍາຍ ພຣະຄຳ ອີກຜູ້ໜຶ່ງ
ລົງມາຈາກແຄວ້ນ ຢູດາຍ ຊື່ ອາຄະໂບ
21:11 ບັດມາຮອດແລ້ວ ອາຄະໂບ ກໍໄດ້ເອົາສາຍຄາດແອວຂອງ ໂປໂລ ຜູກມັດທັງ
ມືທັງຕີນຂອງ ລາວ ໄວ້ ຈຶ່ງບອກວ່າ “ ພຣະວິນຍານ ໄດ້ເວົ້າວ່າ ‘ພວກຢິວຢູ່ເມືອງ
ເຢຣູຊາເລັມ ຊິຜູກມັດເຈົ້າຂອງສາຍຄາດແອວນີ້ໄວ້ ກັບຊິມອບເຂົາໄວ້ໃນມືຂອງ
ຄົນຕ່າງຊາດ’”
21:12 ບັດໄດ້ຍິນຈັ່ງຊັ້ນ ພວກເຮົາພ້ອມກັບຄົນທັງຫລາຍຢູ່ນັ້ນ ເລີຍອ້ອນວອນ ໂປ-
ໂລ ບໍ່ໃຫ້ຂຶ້ນໄປເມືອງ ເຢຣູຊາເລັມ
21:13 ແຕ່ ໂປໂລ ຕອບວ່າ “ເປັນຫຍັງພວກເຈົ້າຈັ່ງຮ້ອງໄຫ້ພາຂ້ອຍຊ້ຳໃຈຫລາຍ ຄື
ວ່າຂ້ອຍນີ້ພ້ອມຢູ່ແລ້ວ ບໍ່ວ່າແຕ່ໃຫ້ເຂົາຜູກມັດໂຕເອງໄວ້ຢ່າງດຽວ ແຕ່ວ່າພ້ອມທີ່
ຊິຕາຍຢູ່ເມືອງ ເຢຣູຊາເລັມ ນຳ ຍ້ອນເຫັນແກ່ພຣະນາມຂອງ ພຣະເຢຊູເຈົ້າ ”
21:14 ບັດເຫັນວ່າ ລາວ ບໍ່ຍອມຟັງ ພວກເຮົາກໍເຊົາຂໍຮ້ອງ ແລ້ວຈັ່ງເວົ້າວ່າ “ຂໍໃຫ້-
ເປັນໄປຕາມພຣະປະສົງຂອງພຣະຜູ້ເປັນເຈົ້າເຖີ”
21:15 ຫລັງຈາກໄດ້ພັກຢູ່ຫັ້ນມາ ພວກເຮົາກໍຈັດເຂົ້າຂອງ ແລ້ວຈັ່ງເດີນທາງຂຶ້ນໄປ
ເມືອງ ເຢຣູຊາເລັມ
21:16 ແລ້ວລູກສິດຜູ້ລາງຄົນຈາກເມືອງ ກາຍຊາເຣຍ ໄດ້ໄປນຳພວກເຮົາ ແລ້ວຈັ່ງ
ນຳພວກເຮົາໄປຫາຄົນໜຶ່ງຊື່ ມະນາໂຊນ ເປັນຊາວເກາະ ກຸບໂຣ ກັບເປັນລູກ-
ສິດລຸ້ນເກົ່າ ແລ້ວພວກເຮົາໄດ້ພັກອາໄສຢູ່ກັບຄົນນັ້ນ
21:17 ແລ້ວບັດພວກເຮົາໄດ້ມາຮອດເມືອງ ເຢຣູຊາເລັມ ພວກພີ່ນ້ອງຢູ່ນັ້ນກໍຕ້ອນ-
ຮັບເອົາພວກເຮົາໄວ້ດ້ວຍຄວາມຍິນດີ
21:18 ແລ້ວບັດມື້ໃໝ່ມາ ໂປໂລ ໄດ້ໄປກັບພວກເຮົາ ເຂົ້າໄປຫາ ຢາໂກໂບ ແລ້ວ
ພວກຜູ້ຫລັກຜູ້ໃຫຍ່ກໍຢູ່ຫັ້ນນຳ

21:19 ບັດ ໂປໂລ ໄດ້ທັກທາຍກັນກັບພວກເຂົາແລ້ວ ຈັ່ງໄດ້ເວົ້າເຫດການທັງປວງ
ຕາມລຳດັບ ທີ່ພຣະເຈົ້າໄດ້ເຮັດໃນໝູ່ຄົນຕ່າງຊາດ ຜ່ານທາງການຮັບໃຊ້ຂອງ
ລາວ
21:20 ບັດຄົນທັງຫລາຍໄດ້ຍິນແລ້ວ ພວກເຂົາຈັ່ງສັນລະເສີນຍົກຍ້ອງພຣະຜູ້ເປັນ-
ເຈົ້າ ກັບໄດ້ເວົ້າກັບ ໂປໂລ ວ່າ “ອ້າຍໃນພຣະເຈົ້າເອີຍ ເຈົ້າເຄີຍເຫັນແລ້ວວ່າມີ
ພວກຢິວເປັນພັນໆ ຄົນທີ່ໄດ້ຮັບເຊື່ອແລ້ວ ແຕ່ຍັງມີໃຈຮ້ອນຮົນໃນການຖືຕາມ
ກົດບັນຍັດຢ່າງເຄັ່ງຄັດ
21:21 ແລ້ວພວກເຂົາເຄີຍໄດ້ຍິນເຖິງເຈົ້າວ່າ ເຈົ້າໄດ້ສອນພວກຄົນ ຢິວ ທີ່ຢູ່ກັບໝູ່
ພວກຄົນຕ່າງຊາດນັ້ນ ໃຫ້ປະຖິ້ມ ໂມເຊ ກັບວ່າບໍ່ຕ້ອງໃຫ້ລູກໆ ຂອງເຂົາເຂົ້າພິ-
ທີຕັດ ຫລືດຳເນີນຕາມຮີດຄອງປະເພນີເກົ່ານັ້ນ
21:22 ເລື່ອງນັ້ນເປັນຈັ່ງໃດ ຄືດີບໍ່ດີທັງສະພາຊິຕ້ອງມາຕຸ້ມໂຮມຕັດສິນກັນ ຍ້ອນ
ພວກເຂົາຕ້ອງໄດ້ຍິນວ່າເຈົ້າໄດ້ມາຮອດແລ້ວ
21:23 ຈັ່ງຊັ້ນ ໃຫ້ເຮັດຕາມທີ່ເຮົາຊິບອກເຈົ້າໄວ້ເດີ້ ຄືວ່າພວກເຮົາມີຜູ້ຊາຍຢູ່ສີ່ຄົນທີ່
ໄດ້ຄຳສາບານໂຕໄວ້
21:24 ຄືໃຫ້ເຈົ້າໄປຊຳລະໂຕກັບຜູ້ຊາຍສີ່ຄົນນັ້ນ ກັບຊ່ອຍອອກຄ່າທຳນຽມໃນການ
ບູຊານຳ ເພື່ອເຂົາຊິໄດ້ແຖຫົວ ນີ້ກໍເພື່ອສະແດງວ່າ ມັນບໍ່ແມ່ນຄວາມຈິງ ເລື່ອງທີ່
ພວກເຂົາໄດ້ຍິນນັ້ນ ແຕ່ເຈົ້າໄດ້ດຳເນີນຕາມລະບຽບການໃນການຮັກສາກົດບັນ-
ຍັດຂອງ ໂມເຊ
21:25 ແຕ່ຝ່າຍຄົນຕ່າງຊາດທີ່ເຊື່ອນັ້ນ ພວກເຮົາໄດ້ຂຽນຈົດໝາຍສະຫລຸບ ບອກ
ພວກເຂົາວ່າບໍ່ຕ້ອງຖືອີຫຍັງຈັ່ງຊັ້ນດອກ ເວັ້ນແຕ່ວ່າພວກເຂົາຄວນຊິຮັກສາໂຕ
ເອງ ເວັ້ນໄວ້ຈາກການກິນຂອງຖວາຍບູຊາຕໍ່ຮູບເຄົາລົບ ກັບຈາກການກິນເລືອດ
ກັບຈາກການກິນຊີ້ນຂອງສັດທີ່ຖືກຮັດຄໍຕາຍ ພ້ອມຈາກການຫລິ້ນຊູ້ນຳ”
21:26 ບັດນີ້ ພໍຮອດມື້ອື່ນເຊົ້າມາ ໂປໂລ ຈັ່ງໄປເຮັດພິທີຊຳລະໂຕນຳຜູ້ຊາຍສີ່ຄົນ
ນັ້ນ ແລ້ວຈັ່ງເຂົ້າໄປໃນພຣະວິຫານ ບອກປະໂລຫິດເຖິງມື້ຄົບກຳນົດການຊຳລະ
ໂຕນັ້ນ ຊຶ່ງເປັນຍາມຖວາຍເຄື່ອງບູຊາສຳລັບພວກເຂົາແຕ່ລະຄົນ

21:27 ແລ້ວບັດພໍເກືອບຄົບເຈັດມື້ນັ້ນ ພໍດີພວກຢິວທີ່ມາຈາກແຄວັ້ນ ເອເຊຍ ບັດ
ເຫັນ ໂປໂລ ໃນພຣະວິຫານກໍໄດ້ຍຸຍົງປະຊາຊົນ ແລ້ວລົງມືຈັບໂຕ ໂປໂລ ໄວ້
21:28 ແລ້ວຮ້ອງກັນຂຶ້ນວ່າ "ຊົນຊາດ ອິສະຣາເອນ ເອີຍ ໃຫ້ຊ່ອຍກັນເດີ້ ແມ່ນຜູ້-
ຊາຍຄົນນີ້ເນາະທີ່ສອນໝົດຄູ່ຄົນທົ່ວຄູ່ຕາແສງໃຫ້ຕໍ່ຕ້ານຊົນຊາດເຮົາ ພ້ອມກັບ
ຕໍ່ຕ້ານກົດບັນຍັດ ກັບຕໍ່ຕ້ານສະຖານສັກສິດນີ້ນໍາ ກັບຫລາຍກວ່ານັ້ນອີກ ເຂົາ
ເຄີຍພາຄົນຊາວເກຣັກເຂົ້າມາໃນພຣະວິຫານອັນສັກສິດນີ້ນໍາ ຈັ່ງໄດ້ເຮັດໃຫ້
ໝ້ອງບໍລິສຸດນີ້ເປັນມົນທິນນໍາ"
21:29 (ຄືພວກເຂົາເວົ້າຈັ່ງຊັ້ນຍ້ອນແຕ່ກ່ອນເຄີຍເຫັນ ໂທຟີໂມ ຊາວເມືອງ ເອເຟ-
ໂຊ ຢູ່ໃນເມືອງກັບ ໂປໂລ ພວກເຂົາຈັ່ງເຂົ້າໃຈຜິດວ່າ ໂປໂລ ໄດ້ພາຄົນນັ້ນເຂົ້າ
ມາໃນພຣະວິຫານ)
21:30 ແລ້ວບັດນີ້ ຄົນໝົດທັງເມືອງກໍລຸກຂຶ້ນ ແລ່ນເຂົ້າໄປຈັບໂຕ ໂປໂລ ລາກ
ລາວ ອອກຈາກພຣະວິຫານ ແລ້ວປະຕູພຣະວິຫານຖືກປິດໄວ້ ໃນຫວ່າງນັ້ນພໍດີ
21:31 ບັດເຂົາພວມຊິຈັດການຂ້າ ໂປໂລ ຂ່າວໄດ້ລືໄປຮອດຫູຂອງນາຍພັນກອງ-
ທັບວ່າ ເມືອງ ເຢຣູຊາເລັມ ເກີດການວຸ້ນວາຍຂຶ້ນທັງເມືອງ
21:32 ໃນຕອນນັ້ນ ນາຍພັນຈັ່ງຄຸມພວກທະຫານກັບພວກນາຍຮ້ອຍ ໄດ້ແລ່ນລົງ
ໄປຫາຄົນກຸ່ມນັ້ນ ບັດພວກເຂົາເຫັນນາຍພັນກັບພວກທະຫານພວມແລ່ນລົງມາ
ເລີຍຖອຍອອກມາເຊົາຄຸ້ຍນຕີ ໂປໂລ
21:33 ນາຍພັນຈັ່ງເຂົ້າໄປໃກ້ແລ້ວຈັບໂຕ ໂປໂລ ໄວ້ ສັ່ງໃຫ້ເອົາໂສ້ສອງເສັ້ນລ່າມ
ລາວ ໄວ້ແລ້ວສອບຖາມວ່າ ຄົນນີ້ເປັນໃຜແລ້ວເຂົາໄດ້ເຮັດອິຫຍັງ
21:34 ບັດນີ້ ຜູ້ລາງຄົນໃນໝູ່ຄົນນັ້ນຮ້ອງວ່າຈັ່ງຊີ້ ອີກຜູ້ລາງຄົນກໍຮ້ອງວ່າຈັ່ງຊັ້ນ
ບັດນາຍພັນເອົາຄວາມແນ່ນອນບໍ່ໄດ້ຍ້ອນວຸ້ນວາຍຫລາຍ ເລີຍສັ່ງໃຫ້ນໍາເອົາ
ໂປໂລ ເຂົ້າໄປໃນຄ້າຍທະຫານ
21:35 ແລ້ວບັດຮອດຂັ້ນໄດຂອງຄ້າຍທະຫານແລ້ວ ພວກທະຫານຕ້ອງຍົກໂຕ ໂປ-
ໂລ ຂຶ້ນໄວ້ ຍ້ອນພວກຝູງຊົນນັ້ນຢາກເຮັດຮ້າຍໃສ່ຜູ້
21:36 ຄືຄູ່ຄົນໃນໝູ່ນັ້ນຕາມໄປຮ້ອງວ່າ "ໃຫ້ຈັດການ ໂລດ ໆ"

21:37 ບັດພວກທະຫານພວມຊິພາ ໂປໂລ ເຂົ້າໄປໃນຄ້າຍທະຫານ ໂປໂລ ຈັ່ງເວົ້າ
ກັບນາຍພັນວ່າ “ຂ້ອຍຂໍເວົ້າກັບທ່ານຈັກໜ່ອຍ” ນາຍພັນຈັ່ງຖາມວ່າ “ເຈົ້າເວົ້າ
ພາສາເກຣັກເປັນຢູ່ບໍ້
21:38 ເຈົ້າເປັນຊາວ ເອຢິບ ຄົນນັ້ນທີ່ໄດ້ກໍ່ການກະບົດມາກ່ອນ ກັບພາພວກຄາດ-
ຕະກອນສີ່ພັນຄົນເຂົ້າໄປໃນຖິ່ນແຫ້ງແລ້ງບໍ່ແມ່ນບໍ້”
21:39 ແຕ່ ໂປໂລ ປະຕິເສດຕອບວ່າ “ຂ້ອຍນີ້ເປັນຄົນ ຢິວ ໄດ້ເກີດໃນເມືອງ ຕາ-
ໄຊ ແຄວ້ນ ກີລີເກຍ ຊຶ່ງບໍ່ແມ່ນເມືອງນ້ອຍໆ ຂ້ອຍຂໍທ່ານອະນຸຍາດໃຫ້ເວົ້າກັບ
ຄົນພວກນັ້ນແໜ່”
21:40 ບັດນາຍພັນອະນຸຍາດແລ້ວ ໂປໂລ ຈັ່ງຢືນຢູ່ຂັ້ນໄດແກວ່ງມືໃຫ້ໝົດຄູ່ຄົນ
ບັດພໍເຂົາມິດລົງແລ້ວ ລາວ ຈັ່ງເວົ້າກັບເຂົາເປັນພາສາເຮັບເຣີ

## ກິດຈະການ ບົດທີ 22

22:1 ເວົ້າວ່າ “ທ່ານພີ່ນ້ອງກັບຜູ້ອາວຸໂສທັງຫລາຍ ກະລຸນາຟັງຄຳໃຫ້ການທີ່ຂ້ອຍ
ຊິແກ້ຄະດີໃຫ້ເຈົ້າຟັງເດີ້ບັດນີ້”
22:2 (ບັດພວກເຂົາໄດ້ຍິນ ລາວ ເວົ້າເປັນພາສາເຮັບເຣີ ເຂົາກໍອອກສຽງນ້ອຍລົງ
ກວ່າເກົ່າ ແລ້ວ ໂປໂລ ຈັ່ງເວົ້າຕໍ່ໄປອີກ)
22:3 “ຂ້ອຍນີ້ເປັນຄົນ ຢິວ ແທ້ ເກີດໃນເມືອງ ຕາໄຊ ແຄວ້ນ ກີລີເກຍ ແຕ່ໄດ້ໃຫຍ່
ຂຶ້ນໃນເມືອງນີ້ ກັບໄດ້ຮຽນໜັງສືກັບອາຈານ ຄາມາລີເອັນ ເລີຍໄດ້ຮັບການສອນ
ຕາມກົດບັນຍັດຂອງພວກພໍ່ຕະກູນຂອງພວກເຮົາຄູ່ແນວຢ່າງເຄັ່ງຄັດ ຈັ່ງມີໃຈ-
ຮ້ອນຮົນຕໍ່ພຣະເຈົ້າ ຄືກັນກັບພວກເຈົ້າໃນຄູ່ມື້ນີ້
22:4 ແລ້ວຂ້ອຍກໍໄດ້ຂົ່ມເຫງຄົນທັງຫລາຍທີ່ຖືໃນທາງທີ່ເອີ້ນວ່າ ‘ທາງນີ້’ ຈົນຮອດ
ຕາຍກໍມີ ກັບໄດ້ຜູກມັດເຂົາຄຸມຂັງໄວ້ໃນຄຸກທັງຜູ້ຊາຍກັບຍິງ
22:5 ຕາມທີ່ມະຫາປະໂລຫິດ ກັບສະພາ ອາດ ເປັນພະຍານໃຫ້ຂ້ອຍກໍໄດ້ ຍ້ອນ
ຂ້ອຍໄດ້ຖືໜັງສືຈາກເຂົາໄປຫາພວກພີ່ນ້ອງ ກັບໄດ້ເດີນທາງໄປເມືອງ ດາມາເຊ
ເພື່ອຈັບມັດຄົນທັງຫລາຍພາມາເມືອງ ເຢຣູຊາເລັມ ໃຫ້ລົງໂທດພວກເຂົາ

22:6 ແຕ່ມັນເປັນໄປທີ່ວ່າ ບັດຂ້ອຍພວມເດີນທາງໄປໃກ້ຊິຮອດເມືອງ ດາມາເຊ
ປະມານເວລາທ່ຽງ ໃນຫວ່າງນັ້ນພໍດີ ມີແສງຈ້າສ່ອງລົງມາຈາກຟ້າອ້ອມໂຕຂ້ອຍ
ໄວ້
22:7 ຂ້ອຍກໍເລີຍລົ້ມລົງເຖິງດິນ ກັບໄດ້ຍິນສຽງຂອງຜູ້ມີອຳນາດເວົ້າກັບຂ້ອຍວ່າ ‘
ໂຊໂລ ໆ ເອີຍ ເປັນຫຍັງເຈົ້າຈັ່ງຂົ່ມເຫງເຮົາ’
22:8 ຂ້ອຍເລີຍຕອບວ່າ ‘ນາຍເຈົ້າຂ້າ ນາຍເປັນຜູ້ໃດ’ ຜູ້ນັ້ນເລີຍບອກຂ້ອຍວ່າ
‘ເຮົາຄື ເຢຊູ ຊາວ ນາຊາເຣັດ ຜູ້ທີ່ເຈົ້າຂົ່ມເຫງ’
22:9 ຝ່າຍຄົນໝູ່ທີ່ຢູ່ນຳຂ້ອຍກໍໄດ້ເຫັນແສງຈ້ານັ້ນ ເລີຍຕົກໃຈຢ້ານ ແຕ່ສຽງທີ່ເພິ່ນ
ເວົ້າກັບຂ້ອຍນັ້ນ ເຂົາບໍ່ໄດ້ຍິນເລີຍ
22:10 ບັດນີ້ ຂ້ອຍຈັ່ງຖາມວ່າ ‘ພຣະຜູ້ເປັນເຈົ້າ ເຈົ້າຂ້າ ຜູ້ຂ້ານີ້ຊິຕ້ອງເຮັດຫຍັງແ
ໜ່’ ແລ້ວພຣະຜູ້ເປັນເຈົ້າຈັ່ງເວົ້າກັບຂ້ອຍວ່າ ‘ໃຫ້ເຈົ້າລຸກຂຶ້ນເຂົ້າໄປໃນເມືອງ
ດາມາເຊ ເດີ້ ແລ້ວຊິມີຄົນຢູ່ຫັ້ນບອກເຈົ້າຄູ່ຢ່າງ ແນວທີ່ເຈົ້າຕ້ອງເຮັດນັ້ນ’
22:11 ແລ້ວຊື່ງຂ້ອຍບໍ່ສາມາດເຫັນຮຸ່ງໄດ້ ຍ້ອນພຣະລັດສະໝີອັນແຮງກ້ານັ້ນ ໝູ່
ຄົນທີ່ມານຳຂ້ອຍກໍໄດ້ຈູງມືພາຂ້ອຍເຂົ້າໄປໃນເມືອງ ດາມາເຊ
22:12 ຢູ່ຫັ້ນກໍມີຜູ້ຊາຍຄົນໜຶ່ງຊື່ວ່າ ອານາເນຍ ເປັນຄົນມີຄວາມເຊື່ອໝັ້ນຕາມ
ກົດບັນຍັດ ກັບມີຊື່ສຽງດີນຳໃນພວກຄົນ ຢິວ ທັງຫລາຍຢູ່ນັ້ນ
22:13 ເຂົາໄດ້ມາຫາຂ້ອຍກັບຢືນຢູ່ນຳແລ້ວເວົ້າວ່າ ‘ອ້າຍ ໂຊໂລ ເອີຍ ໃຫ້ເຫັນໄດ້ຄື
ເກົ່າເດີ້’ ແລ້ວໃນໂມງນັ້ນເອງ ຂ້ອຍຈັ່ງເຫັນເຂົາໄດ້ເລີຍ
22:14 ແລ້ວເຂົາຈັ່ງເວົ້າວ່າ ‘ພຣະເຈົ້າຂອງພວກພໍ່ຕະກູນຂອງພວກເຮົາໄດ້ ເລືອກ
ເຈົ້າໄວ້ ເພື່ອເຈົ້າຊິຮູ້ຈັກພຣະປະສົງຂອງເພິ່ນ ແລ້ວເຫັນອົງຜູ້ທ່ຽງທຳຜູ້ນັ້ນ ກັບ
ໄດ້ຍິນສຽງປາກຂອງເພິ່ນນຳ
22:15 ຄືເຈົ້າຊິເປັນພະຍານຂອງເພິ່ນໃຫ້ໝົດຄູ່ຄົນຮູ້ຮອດເຫດການແນວທີ່ເຈົ້າໄດ້
ເຫັນໄດ້ຍິນນັ້ນ
22:16 ບັດນີ້ເຈົ້າຄອຍຖ້າທ່າຢູ່ເຮັດຫຍັງ ໃຫ້ລຸກຂຶ້ນຮັບການຈຸ່ມນ້ຳເດີ້ ໂດຍຮ້ອງ
ອອກພຣະນາມຂອງພຣະເຢຊູຄຣິດເຈົ້າ ແລ້ວຊິຊຳລະຄວາມຜິດບາບຂອງເຈົ້າ’

22:17 ຕໍ່ມາບັດຂ້ອຍຫລົບມາເມືອງ ເຢຣູຊາເລັມ ກັບພວມອະທິຖານຢູ່ໃນພຣະວິ-
ຫານ ຂ້ອຍກໍເຊືອບຝັນໄປ
22:18 ແລ້ວໃນຄວາມຝັນນັ້ນ ຂ້ອຍໄດ້ເຫັນເພິ່ນມາເວົ້າກັບຂ້ອຍວ່າ ‘ໃຫ້ຟ້າວອອກ
ໄປຈາກເມືອງ ເຢຣູຊາເລັມ ໄວໆ ເດີ້ ຍ້ອນວ່າເຂົາຊິບໍ່ຍອມຮັບໃນຄຳພະຍານນັ້ນ
ທີ່ເຈົ້າຊິອ້າງເຖິງເຮົາ’
22:19 ແລ້ວຂ້ອຍຈັ່ງເວົ້ານຳເພິ່ນວ່າ ‘ພຣະຜູ້ເປັນເຈົ້າ ເຈົ້າຂ້າ ເຂົາໝູ່ນັ້ນຮູ້ຢູ່ແລ້ວ
ວ່າ ຜູ້ຂ້າໄດ້ຈັບຄົນຫລວງຫລາຍທີ່ຮັບເຊື່ອໃນພຣະຜູ້ເປັນເຈົ້າ ລາກໄປຂັງຄຸກກັບ
ຄ້ຽນຕີຕາມສາລາທຳໝົດຄູ່ໜ້ອງ
22:20 ກັບບັດເຂົາເຮັດໃຫ້ເລືອດຂອງ ຊະເຕຟາໂນ ຕົກ ຜູ້ເປັນພະຍານທີ່ຍອມຕາຍ
ເພື່ອທ່ານ ຜູ້ຂ້າກໍໄດ້ຢືນຢູ່ໃກ້ເຫັນດີເຫັນຊອບນຳໃນການທີ່ເຂົາຂ້າ ຊະເຕຟາໂນ
ພ້ອມທັງເຝົ້າເສື້ອຜ້າໃຫ້ເຂົາຜູ້ທີ່ຂ້າ ລາວ ’
22:21 ແລ້ວພຣະຜູ້ເປັນເຈົ້າຈັ່ງເວົ້າກັບຂ້ອຍວ່າ ‘ໃຫ້ໄປເລີຍ ເຮົາຊິໃຊ້ເຈົ້າອອກ-
ຈາກນີ້ໄປທາງໄກ ໄປຫາຄົນຕ່າງຊາດນັ້ນ’”
22:22 ແລ້ວບັດພວກຄົນໄດ້ຟັງ ໂປໂລ ເວົ້າຮອດແຄ່ນີ້ ຈັ່ງຮ້ອງສຽງດັ່ງວ່າ “ເອົາຄົນ
ແນວນີ້ອອກໄປຈາກແຜ່ນດິນໂລກເລີຍ ບໍ່ຄວນຊິໃຫ້ເຂົາມີຊີວິດຢູ່ດອກ”
22:23 ບັດພວກເຂົາພວມໂຫ່ຮ້ອງນັ້ນ ທັງຈີກດຶງເສື້ອອອກ ກັບເອົາຂີ້ຝຸ່ນແກວ່ງຊັດ
ຂຶ້ນໄປເທິງຟ້າ
22:24 ສ່ວນນາຍພັນເລີຍສັ່ງໃຫ້ເອົາໂຕ ໂປໂລ ເຂົ້າໄປໃນຄ້າຍທະຫານ ກັບສັ່ງໃຫ້
ສອບສວນ ລາວ ໂດຍການຄ້ຽນຕີ ເພື່ອຊິໄດ້ຮູ້ວ່າພວກຄົນໝົດເມືອງນັ້ນຮ້ອງ
ກ່າວໂທດ ລາວ ຍ້ອນເລື່ອງອີຫຍັງ
22:25 ບັດທະຫານພວມຊິເອົາເຊືອກໜັງຜູກມັດ ລາວ ໄວ້ ໂປໂລ ຈັ່ງຖາມນາຍ
ຮ້ອຍຜູ້ທີ່ຢືນຢູ່ຫັ້ນວ່າ “ການທີ່ຊິຄ້ຽນຕີຄົນຊາດ ໂຣມ ຜູ້ທີ່ຍັງບໍ່ທັນຖືກການຕັດສິນ
ອີຫຍັງ ຖືກຕ້ອງຕາມກົດໝາຍຢູ່ບໍ້”
22:26 ບັດນາຍຮ້ອຍໄດ້ຍິນ ໂປໂລ ເວົ້າແນວນັ້ນແລ້ວ ຈັ່ງໄປບອກນາຍພັນວ່າ
“ລະວັງເດີ້ ແນວທີ່ຊິເຮັດນັ້ນ ຄືຜູ້ນີ້ເປັນຄົນສັນຊາດ ໂຣມ ”

22:27 ບັດນີ້ ຝ່າຍນາຍພັນເລີຍໄປຫາ ໂປໂລ ຖາມວ່າ “ເຈົ້າເປັນຄົນສັນຊາດ ໂຣມ
ອີຫລີບໍ້ ໃຫ້ບອກເຮົາມາ” ໂປໂລ ຈັ່ງຕອບວ່າ “ແມ່ນແລ້ວ ຂ້ອຍເປັນ”
22:28 ນາຍພັນຈັ່ງຕອບວ່າ “ເຮົາຕ້ອງເສຍເງິນຈຳນວນຫລາຍກ່ອນ ກວ່າຊິໄດ້ເປັນ
ຄົນສັນຊາດ ໂຣມ ” ໂປໂລ ເລີຍໂຕ້ຕອບວ່າ “ຂ້ອຍນີ້ເປັນສັນຊາດ ໂຣມ ແຕ່ເກີດ
ມາ”
22:29 ແລ້ວໃນຫວ່າງນັ້ນພໍດີ ທະຫານທັງຫລາຍທີ່ຊິສອບສວນ ໂປໂລ ກໍປະ ລາວ
ໄວ້ ກັບນາຍພັນບັດຮູ້ວ່າ ໂປໂລ ເປັນຄົນສັນຊາດ ໂຣມ ກໍຕົກໃຈຢ້ານຍ້ອນໄດ້
ຜູກມັດ ລາວ ໄວ້ໂດຍບໍ່ມີເຫດ
22:30 ຮອດມື້ອື່ນເຊົ້າມາ ຍ້ອນນາຍພັນຢາກຮູ້ວ່າພວກຢິວໄດ້ກ່າວຫາ ໂປໂລ ຍ້ອນ
ເລື່ອງອີຫຍັງ ລາວ ຈັ່ງຖອດເຄື່ອງຈອງຈຳອອກຈາກ ໂປໂລ ສັ່ງໃຫ້ຄະນະຫົວ-
ໜ້າປະໂລຫິດ ກັບພວກສະມາຊິກສະພາມາໂຮມກັນ ແລ້ວຈັ່ງພາ ໂປໂລ ລົງໄປ
ໃຫ້ຢືນຢູ່ຕໍ່ໜ້າພວກເຂົາ

## ກິດຈະການ ບົດທີ 23

23:1 ສ່ວນ ໂປໂລ ເລີຍຈ້ອງເບິ່ງພວກສະມາຊິກສະພາ ແລ້ວເວົ້າວ່າ “ທ່ານພີ່ນ້ອງ
ທັງຫລາຍ ຜູ້ຂ້າໄດ້ໃຊ້ຊີວິດຕໍ່ໜ້າພຣະເຈົ້າໂດຍຈິດສຳນຶກຜິດຊອບອັນບໍລິສຸດ
ຈົນຮອດມື້ນີ້”
23:2 ບັດນີ້ ອານາເນຍ ຜູ້ເປັນມະຫາປະໂລຫິດ ເລີຍສັ່ງຄົນທີ່ຢືນຢູ່ໃກ້ ໂປໂລ ໃຫ້
ຕົບປາກ ລາວ
23:3 ແລ້ວ ໂປໂລ ກໍຕອບເຂົາວ່າ “ພຣະເຈົ້າຊິຕົບເຈົ້າ ເຈົ້າຜູ້ເປັນຝາທີ່ທາສີໂດຍ
ປູນຂາວ ເຈົ້ານັ່ງພິພາກສາຂ້ອຍຕາມກົດບັນຍັດ ແລ້ວກໍຍັງສັ່ງໃຫ້ເຂົາຕົບໜ້າ
ຂ້ອຍ ຊຶ່ງເປັນການຜິດກົດບັນຍັດຄືກັນ”
23:4 ບັດນີ້ ຄົນທີ່ຢືນຢູ່ຖັດກັນນັ້ນຈັ່ງເວົ້າວ່າ “ເຈົ້າເວົ້າຫຍາບຄາຍ ໃສ່ມະຫາປະ-
ໂລຫິດຂອງພຣະເຈົ້າຈັ່ງຊີ້ໄດ້ບໍ້”
23:5 ໂປໂລ ເລີຍຕອບວ່າ “ພີ່ນ້ອງທັງຫລາຍເອີຍ ຂ້ອຍບໍ່ຮູ້ວ່າທ່ານເປັນມະຫາ-
ປະໂລຫິດ ຍ້ອນມີຄຳຂຽນໄວ້ແລ້ວວ່າ ‘ຢ່າເວົ້າຫຍາບຊ້າຕໍ່ຜູ້ຫລັກຜູ້ໃຫຍ່ເໜືອ
ເຈົ້າເລີຍ’”

23:6 ບັດ ໂປໂລ ເຫັນວ່າ ພວກຄົນທີ່ຢູ່ໃນປະຊຸມສະພານັ້ນ ຝ່າຍໜຶ່ງເປັນພວກ ຊາ-
ດູກາຍ ກັບອີກຝ່າຍໜຶ່ງເປັນພວກ ຟາຣີຊາຍ ລາວ ຈັ່ງຮ້ອງຂຶ້ນຕໍ່ໜ້າທີ່ປະຊຸມ
ວ່າ "ທ່ານພີ່ນ້ອງທັງຫລາຍ ຂ້ອຍນີ້ເປັນ ຟາຣີຊາຍ ກັບເປັນລູກຊາຍຂອງຄົນ
ຟາຣີຊາຍ ນຳ ທີ່ຂ້ອຍຖືກການພິຈາລະນານີ້ ກໍຍ້ອນວ່າຂ້ອຍມີຄວາມຫວັງໃນ
ການເປັນຂຶ້ນມາຈາກຕາຍ"
23:7 ພໍແຕ່ ລາວ ເວົ້າຈັ່ງຊັ້ນແລ້ວ ພວກ ຟາຣີຊາຍ ກັບພວກ ຊາດູກາຍ ໄດ້ເກີດ
ການໂຕ້ຖຽງກັນຢ່າງໃຫຍ່ ທີ່ປະຊຸມສະພາຈັ່ງແຕກເປັນສອງຟາກສອງຝ່າຍ
23:8 ນີ້ກໍຍ້ອນວ່າພວກ ຊາດູກາຍ ຖືກັນວ່າ ການທີ່ເປັນຂຶ້ນມາຈາກຕາຍນັ້ນກໍບໍ່ມີ
ເລີຍ ກັບວ່າເທວະທູດຫລືວິນຍານກໍບໍ່ມີນຳ ແຕ່ພວກ ຟາຣີຊາຍ ຖືວ່າມີໝົດທັງ
ສອງແບວ
23:9 ແລ້ວເກີດມີເລື່ອງອາລະວາດກັນຢ່າງໃຫຍ່ ພວກນັກທຳບາງຄົນທີ່ຢູ່ຝ່າຍຄະ-
ນະ ຟາຣີຊາຍ ໄດ້ລຸກຂຶ້ນອ້າງວ່າ "ເຮົາບໍ່ເຫັນວ່າຄົນນີ້ມີຄວາມຜິດອີຫຍັງເລີຍ ຄື
ຄັ່ນວ່າມີວິນຍານກໍດີ ຫລືເທວະທູດກໍດີທີ່ໄດ້ເວົ້າກັບເຂົາ ຂໍຢ່າໃຫ້ພວກເຮົາຕໍ່ຕ້ານ
ກັບພຣະເຈົ້າເລີຍ"
23:10 ແລ້ວບັດການໂຕ້ຖຽງກັນນັ້ນໄດ້ເກີດຮຸນແຮງແຮງຂຶ້ນ ນາຍພັນຢ້ານວ່າເຂົາ
ຊິຈັບໂຕ ໂປໂລ ດຶງຍາດກັນຈົນຈີກເປັນທ່ອນໆ ລາວ ເລີຍສັ່ງໃຫ້ພວກທະຫານ
ລົງໄປຮັບເອົາໂຕ ໂປໂລ ອອກຈາກພວກຄົນນັ້ນ ກັບ ລາວ ເຂົ້າໄປໄວ້ໃນຄ້າຍ
ທະຫານ
23:11 ແຕ່ວ່າຕອນກາງຄືນມື້ນັ້ນເອງ ພຣະຜູ້ເປັນເຈົ້າໄດ້ຢືນຢູ່ກັບ ໂປໂລ ໄດ້ເວົ້າ
ວ່າ " ໂປໂລ ເອີຍ ໃຫ້ມີກຳລັງໃຈເດີ້ ຄືເຈົ້າໄດ້ເປັນພະຍານໃຫ້ເຮົາໃນເມືອງ ເຢຣູ-
ຊາເລັມ ນີ້ແນວໃດ ເຈົ້າກໍຊິຕ້ອງໄປເປັນພະຍານໃນ ໂຣມ ແນວນັ້ນນຳ"
23:12 ແລ້ວຮອດຕອນເຊົ້າມາ ພວກຢິວຜູ້ລາງຄົນໄດ້ຮ່ວມກັນສາບານໂຕໄວ້ວ່າ
ເຂົາຊິບໍ່ກິນກັບຊິບໍ່ດື່ມອີຫຍັງຈົນກວ່າຊິໄດ້ຂ້າ ໂປໂລ ໃຫ້ໄດ້
23:13 ຝ່າຍຄົນທີ່ຮ່ວມກັນປອງຮ້າຍນັ້ນມີສີ່ສິບກວ່າຄົນ
23:14 ຄົນໝູ່ນັ້ນຈັ່ງໄປຫາຄະນະຫົວໜ້າປະໂລຫິດ ກັບພວກຜູ້ຫລັກຜູ້ໃຫຍ່ເວົ້າວ່າ
"ພວກຂ້ອຍໄດ້ສາບານໂຕໄວ້ວ່າ ຊິບໍ່ກິນອີຫຍັງຈົນກວ່າຊິໄດ້ຂ້າ ໂປໂລ ໃຫ້ໄດ້

23:15 ບັດນີ້ ໃຫ້ພວກເຈົ້າກັບພວກສະມາຊິກສະພາຝາກຄວາມໄປຫານາຍພັນ ໃຫ້
ລາວ ສົ່ງ ໂຕ ໂປໂລ ລົງມາຫາພວກເຈົ້າມື້ອື່ນ ເພື່ອຊິໄດ້ຊັກຖາມຄວາມໃຫ້ຊັດຂຶ້ນ
ກວ່າແຕ່ກ່ອນ ຝ່າຍພວກຂ້ອຍກໍຊິກຽມໂຕໄວ້ຄອຍຖ້າ ເພື່ອຊິຂ້າ ໂປໂລ ຕອນໃກ້
ຊິມາຮອດ"
23:16 ແຕ່ພໍລູກຊາຍຂອງນ້ອງສາວ ໂປໂລ ໄດ້ຍິນພວກເຂົາວາງແຜນການກັບດັກ
ເພື່ອຊິຂ້າ ໂປໂລ ກໍໄດ້ຂຶ້ນໄປໃນຄ້າຍທະຫານເພື່ອບອກ ໂປໂລ ໄວ້
23:17 ພໍຫລານບອກ ລາວ ແລ້ວ ໂປໂລ ຈັ່ງເອີ້ນນາຍຮ້ອຍຄົນໜຶ່ງມາ ເວົ້າວ່າ "ຂໍ
ໃຫ້ນໍາຜູ້ຊາຍໜຸ່ມຄົນນີ້ໄປຫານາຍພັນແໜ່ ຍ້ອນເຂົາມີແນວສໍາຄັນແນວໜຶ່ງທີ່ຊິ
ຕ້ອງແຈ້ງໃຫ້ນາຍພັນຮູ້ຈັກ"
23:18 ຈັ່ງຊັ້ນ ນາຍຮ້ອຍເລີຍນໍາຜູ້ຊາຍໜຸ່ມນັ້ນໄປຫານາຍພັນເວົ້າວ່າ " ໂປໂລ ຜູ້
ຖືກຂັງຢູ່ຫັ້ນເອີ້ນຂ້ອຍ ໃຫ້ນໍາຜູ້ຊາຍໜຸ່ມຜູ້ນີ້ມາຫານາຍ ຍ້ອນເຂົາມີແນວສໍາຄັນ
ທີ່ຊິຕ້ອງແຈ້ງໃຫ້ນາຍຮູ້ຈັກ"
23:19 ນາຍພັນຈັ່ງຈູງມືຜູ້ຊາຍໜຸ່ມນັ້ນໄປຕາມລໍາພັງເພື່ອເວົ້າເປັນສ່ວນໂຕ ແລ້ວ
ຖາມວ່າ "ໜຸ່ມຊິເວົ້າອີຫຍັງກັບເຮົາ"
23:20 ຜູ້ຊາຍໜຸ່ມນັ້ນຈັ່ງຕອບວ່າ "ພວກຢິວຕົກລົງກັນຊິຂໍນາຍໃຫ້ສົ່ງລຸງ ໂປໂລ ລົງ
ໄປສະພາມື້ອື່ນ ເຮັດຄືກັນກັບວ່າຊິສອບສວນເລື່ອງ ລາວ ໃຫ້ຊັດຂຶ້ນກວ່າແຕ່-
ກ່ອນ
23:21 ແຕ່ຂໍຢ່າເຮັດຕາມຄໍາຂໍຮ້ອງເຂົາ ຍ້ອນວ່າພວກເຂົາມີຢູ່ສີ່ສິບຄົນ ວາງແຜນ-
ການກັບດັກໄວ້ວ່າ ຊິຄອຍຖ້າປອງຮ້າຍໃສ່ ໂປໂລ ກັບໄດ້ສາບານໂຕໄວ້ວ່າຊິບໍ່
ກິນຫລືດື່ມອີຫຍັງຈົນກວ່າຊິໄດ້ຂ້າ ລາວ ໃຫ້ໄດ້ ແລ້ວຕອນນີ້ພວກເຂົາກໍພ້ອມ
ແລ້ວ ຖ້າແຕ່ນາຍອອກຄໍາສັ່ງເທົ່ານັ້ນ"
23:22 ພໍໄດ້ຮັບຟັງແລ້ວ ນາຍພັນຈັ່ງປ່ອຍໃຫ້ຜູ້ຊາຍໜຸ່ມໄປ ສັ່ງໄວ້ວ່າ "ຢ່າບອກຜູ້-
ໃດເລີຍ ວ່າ ໂຕໄດ້ແຈ້ງຄວາມເລື່ອງນີ້ກັບເຮົາ"
23:23 ແລ້ວນາຍພັນຈັ່ງເອີ້ນນາຍຮ້ອຍສອງຄົນມາ ສັ່ງວ່າ "ໃຫ້ຈັດພົນທະຫານສອງ
ຮ້ອຍຄົນ ກັບທະຫານມ້າເຈັດສິບຄົນ ກັບທະຫານຫອກສອງຮ້ອຍຄົນໃຫ້ພ້ອມເດີ້
ແລ້ວຊິໃຫ້ໄປເມືອງ ກາຍຊາເຣຍ ຕອນສາມທຸ້ມໃນຄືນນີ້

23:24 ກັບໃຫ້ຈັດມ້າມາໃຫ້ ໂປໂລ ຂີ່ ເພື່ອຊິສົ່ງໄປຫາ ເຟລິກ ຜູ້ວ່າລາຊະການ
ເມືອງ ຢ່າງປອດໄພ"
23:25 ແລ້ວນາຍພັນຈັ່ງຂຽນຈົດໝາຍໄປຍັງຜູ້ວ່າແນວນີ້
23:26 "ຮຽນ ທ່ານ ເຟລິກ ຜູ້ວ່າລາຊະການ ຈາກ ນາຍພັນ ກະລາວດິໂອ ລີເຊຍ
23:27 ຄົນຜູ້ນີ້ໄດ້ຖືກພວກຢິວຢູ່ທາງນີ້ຈັບໄວ້ ໝາຍໄວ້ວ່າຊິຂ້າເຂົາ ແຕ່ພໍໄດ້ຂ່າວ
ວ່າເຂົາເປັນຄົນສັນຊາດ ໂຣມ ຜູ້ຂ້າໄດ້ນຳກຸ່ມທະຫານໄປຊ່ອຍກອບກູ້ເຂົາໄວ້
23:28 ແລ້ວບັດຜູ້ຂ້າຢາກຮູ້ເຫດທີ່ພວກຢິວຟ້ອງເຂົາ ຜູ້ຂ້າຈັ່ງພາເຂົາໄປສະພາ
ຂອງພວກຢິວ
23:29 ຊິ່ງຜູ້ຂ້າເຫັນວ່າເຂົາຖືກຟ້ອງຮ້ອງໃນເລື່ອງກົດເກນຕາມປະເພນີຂອງພວກ-
ເຂົາ ແຕ່ບໍ່ມີຂໍ້ຫາອິຫຍັງທີ່ເຂົາຄວນຊິຕາຍຫລືຄວນຊິຕ້ອງຂັງໄວ້
23:30 ແລ້ວພໍຜູ້ຂ້າໄດ້ຮູ້ວ່າ ພວກຢິວມີແຜນການປອງຮ້າຍໃສ່ຄົນນີ້ ຜູ້ຂ້າຈັ່ງສົ່ງ
ເຂົາມາຫາທ່ານຜູ້ວ່າ ແລ້ວໄດ້ສັ່ງໃຫ້ພວກກ່າວຫາມາວ່າຄວາມໃຫ້ຜູ້ນັ້ນຕໍ່ໜ້າ
ທ່ານຜູ້ວ່າ"
23:31 ຈັ່ງຊັ້ນ ບັດຮອດຕອນກາງຄືນ ພວກທະຫານຈັ່ງພາ ໂປໂລ ໄປເມືອງ ອັນຕິ-
ປາຕີ ຕາມຄຳສັ່ງນັ້ນ
23:32 ບັດຮອດມື້ອື່ນເຊົ້າ ເຂົາໃຫ້ທະຫານມ້າໄປສົ່ງ ໂປໂລ ແລ້ວເຂົາກໍກັບໄປຄ້າຍ
ທະຫານ
23:33 ບັດທະຫານມ້າໄປຮອດເມືອງ ກາຍຊາເຣຍ ແລ້ວ ຈັ່ງສົ່ງຈົດໝາຍໄປຫາຜູ້ວ່າ
ລາຊະການເມືອງ ກັບໄດ້ມອບ ໂປໂລ ໄວ້ໃຫ້ທ່ານນຳ
23:34 ແລ້ວບັດຜູ້ວ່າລາຊະການເມືອງໄດ້ອ່ານຈົດໝາຍແລ້ວ ຈັ່ງຖາມ ໂປໂລ ວ່າ
ລາວ ມາຈາກແຄວ້ນໃດ ບັດພໍທ່ານຜູ້ວ່າຮູ້ວ່າມາຈາກ ກີລີເກຍ
23:35 ທ່ານຜູ້ວ່າຈັ່ງເວົ້າວ່າ "ບັດພວກຜູ້ກ່າວຫາເຈົ້າມາພ້ອມກັນແລ້ວ ເຮົາຊິຟັງຄຳ
ໃຫ້ການຂອງເຈົ້າ" ແລ້ວທ່ານຜູ້ວ່າຈັ່ງສັ່ງໃຫ້ຄຸມໂຕ ໂປໂລ ໄປໄວ້ທີ່ສານ ປະໄຣ-
ໂຕຣຽມ ຂອງ ເຮໂຣດ

# ກິດຈະການ ບົດທີ 24

24:1 ແລ້ວຢູ່ມາອີກຫ້າມື້ ອານາເນຍ ມະຫາປະໂລຫິດ ຈັ່ງລົງໄປກັບພວກຜູ້ຫລັກ-
ຜູ້ໃຫຍ່ຂອງເມືອງ ພ້ອມທັງນັກກົດໝາຍຜູ້ໜຶ່ງທີ່ເປັນນັກເວົ້າຊື່ ເຕຕູໂລ ພວກນີ້
ໄດ້ອະທິບາຍຄຳຟ້ອງຮ້ອງຕໍ່ ໂປໂລ ໃຫ້ທ່ານຜູ້ວ່າຟັງ
24:2 ແລ້ວບັດ ໂປໂລ ຖືກເອີ້ນເຂົ້າມາ ເຕຕູໂລ ຈັ່ງຕັ້ງຕົ້ນເລີ່ມຟ້ອງໃສ່ ລາວ ວ່າ
"ທ່ານ ເຟລິກ ຜູ້ມີກຽດ ດ້ວຍທ່ານເອງ ພວກຜູ້ຂ້າໄດ້ມີຄວາມສະຫງົບສຸກ ກັບ
ຄວາມຈະເລີນຫລາຍ ຍ້ອນທ່ານຜູ້ວ່າໄດ້ນຳມາໃຫ້ຊົນຊາດຂອງພວກຜູ້ຂ້າໂດຍ
ການຄຸ້ມຄອງອັນດີງາມຂອງທ່ານ
24:3 ຜູ້ຂ້າທັງຫລາຍນ້ອມຮັບຄູ່ຢ່າງຢູ່ຄູ່ໝ້ອງໂດຍຄວາມກະຕັນຍູເປັນຢ່າງຍິ່ງຢູ່
ສະເໝີ
24:4 ແຕ່ເພື່ອບໍ່ໃຫ້ລົບກວນທ່ານຫລາຍກວ່ານີ້ອີກ ຜູ້ຂ້າຂໍຄວາມກະລຸນາກະລຸນາ
ຟັງຜູ້ຂ້າຈັກໜ່ອຍໜຶ່ງ
24:5 ຄືຜູ້ຂ້າທັງຫລາຍເຫັນວ່າ ຜູ້ຊາຍຄົນນີ້ເປັນຄົນອັນທະພານທີ່ຍຸຍົງພວກຊົນ-
ຊາດ ຢິວ ໃຫ້ເກີດການວຸ້ນວາຍຮອດທົ່ວໂລກ ແລ້ວກໍເປັນໂຕໂຈກຂອງພວກ ນາ-
ຊາເຣັດ ນັ້ນນຳ
24:6 ກັບອີກບັນຫາໜຶ່ງ ເຂົາໝາຍຊິເຮັດໃຫ້ພຣະວິຫານເປັນມົນທິນ ຜູ້ຂ້າທັງ-
ຫລາຍຈັ່ງຈັບເຂົາໄວ້ ແລ້ວວ່າຊິພິພາກສາເຂົາຕາມກົດໝາຍຂອງພວກຜູ້ຂ້າ
24:7 ແຕ່ນາຍພັນ ລີເຊຍ ໄດ້ມາໃຊ້ອຳນາດແຍ່ງໂຕເຂົາອອກຈາກມືຂອງພວກຜູ້ຂ້າ
ໄປກ່ອນ
24:8 ແລ້ວກໍສັ່ງໃຫ້ພວກຜູ້ກ່າວຫາມາຟ້ອງເຂົາຕໍ່ໜ້າທ່ານ ຄັ່ນທ່ານເອງຊິໄຕ່ສວນ
ເຂົາ ທ່ານຊິຮູ້ໄດ້ວ່າ ຂໍ້ກ່າວຫາຂອງພວກຜູ້ຂ້າແມ່ນຄວາມຈິງຫລືບໍ່"
24:9 ຝ່າຍພວກຢິວກໍສະໜັບສະໜູນຄຳກ່າວຫາໂດຍຢືນຢັນວ່າເປັນຈິງໝົດ
24:10 ບັດຜູ້ວ່າລາຊະການເມືອງອະນຸຍາດໃຫ້ ໂປໂລ ເວົ້າ ລາວ ເລີຍເວົ້າວ່າ
"ເນື່ອງຈາກທີ່ຜູ້ຂ້າໄດ້ຮູ້ວ່າ ທ່ານເປັນຜູ້ພິພາກສາໃຫ້ຊົນຊາດນີ້ຫລາຍປີມາແລ້ວ
ຜູ້ຂ້າຈັ່ງຂໍແກ້ຄະດີຂອງຜູ້ຂ້າໂດຍຄວາມຍິນດີ

24:11 ທ່ານ ອາດ ສືບຮູ້ໄດ້ວ່າ ມັນບໍ່ເກີນສິບສອງມື້ຕັ້ງແຕ່ຜູ້ຂ້າໄດ້ຂຶ້ນໄປນະມັດ-
ສະການໃນເມືອງ ເຢຣູຊາເລັມ ນັ້ນ
24:12 ແລ້ວຄົນພວກນີ້ບໍ່ໄດ້ເຫັນຜູ້ຂ້າຖຽງກັນກັບຜູ້ໜຶ່ງຜູ້ໃດ ຫລືຍຸຍົງປະຊາຊົນໃຫ້
ວຸ້ນວາຍເລີຍ ບໍ່ວ່າໃນພຣະວິຫານ ໃນສາລາທຳ ຫລືໃນເມືອງກໍດີ
24:13 ແລ້ວພວກເຂົາບໍ່ສາມາດທີ່ຊິພິສູດເຫດການທັງໝົດແນວໝູ່ນີ້ທີ່ເຂົາກຳລັງ
ຟ້ອງໃສ່ຜູ້ຂ້າໄດ້
24:14 ແຕ່ວ່າຜູ້ຂ້າຂໍຮັບຕໍ່ໜ້າທ່ານຜູ້ວ່າຢ່າງໜຶ່ງ ຄືຕາມ 'ທາງນັ້ນ' ທີ່ເຂົາຖືວ່າເປັນ
ລັດທິນອກຮີດ ຜູ້ຂ້ານະມັດສະການພຣະເຈົ້າຂອງພວກພໍ່ຕະກູນທັງຫລາຍຂອງ
ຜູ້ຂ້າ ຈັ່ງໄດ້ເຊື່ອຖືຄຳທີ່ມີຂຽນໄວ້ໃນກົດບັນຍັດ ກັບໃນຂໍ້ຂຽນຂອງຜູ້ເປັນປາກ-
ເປັນສຽງທັງໝົດ
24:15 ຜູ້ຂ້າຈັ່ງມີຄວາມຫວັງໃນພຣະເຈົ້າຄືກັນກັບພວກເຂົາເອງ ຄືມີຄວາມຫວັງວ່າ
ຄົນໝົດທັງປວງ ບໍ່ວ່າຊິເປັນຜູ້ດີຫລືຜູ້ບໍ່ດີກໍຕາມ ຊິໄດ້ເປັນຂຶ້ນມາຈາກຄວາມ
ຕາຍໝົດຄູ່ຄົນ
24:16 ໃນຂໍ້ນີ້ຜູ້ຂ້າພະຍາຍາມຢູ່ຕະຫລອດທີ່ຊິຕາມຈິດສຳນຶກຜິດຊອບບໍລິສຸດ
ໂດຍບໍ່ມີຜິດຕໍ່ພຣະເຈົ້າກັບຕໍ່ມະນຸດນຳ
24:17 ບັດນີ້ ຫລັງຈາກຫລາຍປີມາແລ້ວ ຜູ້ຂ້າໄດ້ນຳເງິນການກຸສົນມາບໍລິຈາກຊົນ-
ຊາດຂອງຜູ້ຂ້າ ພ້ອມກັບເຄື່ອງບູຊານຳ
24:18 ພໍຜູ້ຂ້າພວມເຮັດຢູ່ຫັ້ນ ພວກຢິວຜູ້ລາງຄົນທີ່ມາຈາກແຄວັ້ນ ເອເຊຍ ໄດ້ຮັບ
ຜູ້ຂ້າໃນພຣະວິຫານຢູ່ແຕ່ຜູ້ດຽວຕອນທີ່ຜູ້ຂ້າຊຳລະໂຕຕາມພິທີ ບໍ່ມີໃຜກໍ່ການ
ອາລະວາດ ຫລືການວຸ້ນວາຍອີຫຍັງເລີຍ
24:19 ຄັ່ນຄົນໝູ່ນັ້ນມີເລື່ອງອີຫຍັງທີ່ຊິຟ້ອງຜູ້ຂ້າ ເຂົາຄວນຊິມາຟ້ອງຕໍ່ໜ້າທ່ານຜູ້
ວ່າຢູ່ນີ້ແລ້ວ
24:20 ຫລືຂໍໃຫ້ຄົນໝູ່ນີ້ເອງກ່າວເລື່ອງຄວາມຜິດທີ່ພວກເຂົາຫາວ່າໄດ້ເຫັນ ບັດຜູ້-
ຂ້າຢືນຢູ່ຕໍ່ໜ້າສະພາ
24:21 ເວັ້ນໄວ້ແຕ່ຂໍ້ດຽວທີ່ຂ້ອຍໄດ້ຮ້ອງຂຶ້ນໃນທ່າງກາງພວກເຂົາວ່າ 'ມື້ນີ້ຂ້ອຍ
ຖືກພິຈາລະນາຕໍ່ໜ້າພວກເຈົ້າ ຍ້ອນເຫດເລື່ອງການເປັນຂຶ້ນມາຈາກຕາຍ'"

24:22 ບັດຜູ້ວ່າ ເຟລິກ ໄດ້ຍິນຄວາມແນວໝູ່ນີ້ ທ່ານກໍເລື່ອນການພິຈາລະນາໄວ້
ກ່ອນ ຍ້ອນທ່ານໄດ້ເຂົ້າໃຈເລື່ອງຂອງ “ທາງນັ້ນ” ເປັນຢ່າງດີແລ້ວ ທ່ານຈັ່ງເວົ້າ
ໃຫ້ ໂປໂລ ຟັງວ່າ “ບັດນາຍພັນ ລີເຊຍ ລົງມາແລ້ວ ເຮົາຊິຊໍາລະຄວາມຂອງເຈົ້າ”
24:23 ແລ້ວຜູ້ວ່າ ເຟລິກ ສັ່ງນາຍຮ້ອຍໃຫ້ຄຸມໂຕ ໂປໂລ ໄວ້ ໂດຍໃຫ້ ລາວ ມີຄວາມ
ອິດສະຫລະ ບໍ່ໃຫ້ຫ້າມໝູ່ ລາວ ທີ່ຊິເຂົ້າມາຮັບໃຊ້ຫລືຢ້ຽມຍາມ ລາວ
24:24 ບັດບໍ່ຈັກມື້ຜ່ານມາ ຜູ້ວ່າ ເຟລິກ ມາກັບພັນລະຍາຊື່ ດູຊີນລາ ເປັນຊາດ
ຢິວ ແລ້ວຈັ່ງເອີ້ນໃຫ້ ໂປໂລ ມາ ໄດ້ຟັງ ລາວ ເວົ້າເລື່ອງຄວາມເຊື່ອໃນ ພຣະ-
ຄຣິດ
24:25 ແລ້ວບັດ ລາວ ອ້າງເຫດຜົນເຖິງເລື່ອງຄວາມຊອບທຳ ການຄວບຄຸມຕົວເອງ
ກັບການພິພາກສາອັນໃຫຍ່ຫລວງທີ່ຊິມານັ້ນ ທ່ານ ເຟລິກ ເກີດຢ້ານຈົນໂຕສັ່ນ
ຈັ່ງເວົ້າວ່າ “ງວດນີ້ໃຫ້ໄປກ່ອນເດີ້ ບັດເຮົາມີໂອກາດດີເຮົາຊິເອີ້ນເຈົ້າມາອີກ”
24:26 ອີກຢ່າງໜຶ່ງ ທ່ານຜູ້ວ່າ ເຟລິກ ນັ້ນຫວັງວ່າ ໂປໂລ ອາດ ຊິໃຫ້ເງິນສິນບົນ
ເພື່ອທ່ານຊິໄດ້ປ່ອຍ ລາວ ໄປ ຈັ່ງຊັ້ນທ່ານຈັ່ງເອີ້ນ ໂປໂລ ມາຊຸມກັນດຸ
24:27 ແຕ່ຢູ່ມາອີກສອງປີ ນາຍ ໂປກີໂອ ເຟຊະໂຕ ມາຮັບລາຊະການແທນ ເຟ-
ລິກ ເຟລິກ ຫວັງຢາກໃຫ້ຜູ້ນຳພວກຢິວເຫັນດີເຫັນຊອບກັບເຂົາ ເລີຍຖິ້ມ ໂປໂລ
ໄວ້ໃນຄຸກ

## ກິດຈະການ ບົດທີ 25

25:1 ບັດ ເຟຊະໂຕ ເຂົ້າຮັບຕຳແໜ່ງເປັນຜູ້ວ່າລາຊະການໄດ້ສາມມື້ແລ້ວ ຈັ່ງເດີນ-
ທາງອອກຈາກເມືອງ ກາຍຊາເຣຍ ຂຶ້ນໄປເມືອງ ເຢຣູຊາເລັມ
25:2 ບັດນີ້ ຫົວໜ້າປະໂລຫິດ ກັບຄົນ ຢິວ ຜູ້ສຳຄັນໆ ຢູ່ເມືອງ ເຢຣູຊາເລັມ ໄດ້
ສວຍໂອກາດມາຟ້ອງ ໂປໂລ ຕໍ່ ເຟຊະໂຕ ກັບໄດ້ວິງວອນທ່ານ
25:3 ຂໍຄວາມກະລຸນານຳ ເຟຊະໂຕ ຢາກໃຫ້ທ່ານສົ່ງ ໂປໂລ ມາເມືອງ ເຢຣູຊາ-
ເລັມ ຄືເຂົາຄຶດຊິວາງກັບດັກໄວ້ວ່າຊິຄອຍຖ້າທ່າຂ້າ ລາວ ຢູ່ກາງທາງ
25:4 ແຕ່ ເຟຊະໂຕ ໄດ້ບອກພວກເຂົາວ່າ ໂປໂລ ຄວນຊິຖືກຄຸມໄວ້ໃນເມືອງ ກາຍ-
ຊາເຣຍ ນັ້ນ ແລ້ວອີກຈັກໜ່ອຍ ລາວ ເອງກໍຊິເມືອເມືອງນັ້ນນຳ

25:5 ຈັ່ງຊັ້ນ ເຟຊະໂຕ ເລີຍແນະນຳເຂົາວ່າ "ຄັນ ໂປໂລ ມີຄວາມຜິດອີຫຍັງຄືກັນ-
ກັບທີ່ພວກເຈົ້າວ່າ ຄົນໜຶ່ງຄົນໃດໃນພວກເຈົ້າທີ່ສະດວກກໍໃຫ້ເຂົາລົງໄປພ້ອມ
ກັບເຮົາແລ້ວຍື່ນຄຳຟ້ອງເອົາເຖີ"
25:6 ແລ້ວບັດ ເຟຊະໂຕ ພັກຢູ່ນັ້ນອີກສິບກວ່າມື້ ກໍໄດ້ລົງໄປເມືອງ ກາຍຊາເຣຍ
ແລ້ວບັດຮອດມື້ໃໝ່ມາ ທ່ານຈັ່ງນັ່ງບັນລັງພິພາກສາ ສັ່ງໃຫ້ພາ ໂປໂລ ເຂົ້າມາ
25:7 ບັດ ໂປໂລ ເຂົ້າມາແລ້ວ ພວກຢິວທີ່ລົງມາຈາກເມືອງ ເຢຣູຊາເລັມ ກໍພາກັນ
ຢືນອ້ອມໄວ້ ຈັ່ງເວົ້າຕູ່ໃສ່ ລາວ ແນວທີ່ຮ້າຍແຮງຫລາຍຂໍ້ ແຕ່ບໍ່ມີຫຼັກຖານຫລື
ແນວພິສູດໄດ້ເລີຍ
25:8 ໂປໂລ ຈັ່ງແກ້ຄະດີເອົາເອງວ່າ "ຂ້ອຍບໍ່ມີຂໍ້ຄະດີຄວາມຜິດແນວນັ້ນດອກ ບໍ່
ວ່າເປັນຕໍ່ກົດໝາຍຂອງຄົນ ຢິວ ເຮົາ ຫລືຕໍ່ພຣະວິຫານ ຫລືຕໍ່ຈັກກະພັດ ກາຍຊາ
ບໍ່ມີຈັກແນວເລີຍ"
25:9 ແຕ່ ເຟຊະໂຕ ນັ້ນພ້ອມທີ່ຊິເອົາໃຈພວກຢິວຈັ່ງຖາມ ໂປໂລ ວ່າ "ເຈົ້າຊິຍອມ
ຂຶ້ນໄປຍັງເມືອງ ເຢຣູຊາເລັມ ໃຫ້ເຮົາຊຳລະຄວາມເລື່ອງນີ້ຢູ່ນັ້ນບໍ່"
25:10 ແລ້ວ ໂປໂລ ຕອບວ່າ "ສ່ວນຂ້ອຍນີ້ ຂ້ອຍໄດ້ຢືນຢູ່ສານຕັດສິນຂອງ ກາຍ-
ຊາ ແລ້ວ ທີ່ຊິພິຈາລະນາຄະດີຢູ່ເມືອງ ກາຍຊາເຣຍ ນີ້ກໍດີແລ້ວ ຝ່າຍຄົນ ຢິວ ນັ້ນ
ຂ້ອຍບໍ່ໄດ້ເຮັດຜິດອີຫຍັງຕໍ່ເຂົາຈັກແນວເລີຍ ຕາມທີ່ທ່ານຮູ້ດີຢູ່ແລ້ວ
25:11 ຄື ຄັນຂ້ອຍໄດ້ເຮັດຜິດອີຫລີ ຫລືໄດ້ເຮັດຫຍັງທີ່ຄວນຊິເປັນໂທດເຖິງຕາຍ
ຂ້ອຍກໍຍອມຕາຍບໍ່ຂັດຂືນອີຫຍັງເລີຍ ແຕ່ຄັນເລື່ອງທີ່ເຂົາພວກນີ້ຟ້ອງຮ້ອງຂ້ອຍ
ນັ້ນເປັນຄວາມບໍ່ຈິງ ກໍບໍ່ມີຜູ້ໃດມີສິດອຳນາດທີ່ຊິມອບຂ້ອຍໄວ້ໃຫ້ເຂົາເລີຍ ແຕ່
ບັດນີ້ຂ້ອຍຂໍຮ້ອງອຸທອນເຖິງ ກາຍຊາ "
25:12 ບັດນີ້ ເຟຊະໂຕ ພໍໄດ້ຫາລືກັນກັບຄະນະທີ່ປຶກສາແລ້ວຈັ່ງຕອບ ໂປໂລ ວ່າ
"ເຈົ້າໄດ້ອຸທອນເຖິງ ກາຍຊາ ບໍ້ ຈັ່ງຊັ້ນ ເຈົ້າກໍຊິຕ້ອງໄປເຂົ້າເຝົ້າ ກາຍຊາ "
25:13 ແລ້ວຢູ່ມາອີກຫລາຍມື້ ກະສັດ ອາຄຣິປາ ກັບລາຊິນີ ເບນີເກ ໄດ້ມາເມືອງ
ກາຍຊາເຣຍ ເພື່ອຢ້ຽມທັກທາຍກັນກັບ ເຟຊະໂຕ ນັ້ນ

25:14 ຕອນທ່ານ ອາຄຣິປາ ກັບນາງ ເບນີເກ ຢູ່ນັ້ນຫລາຍມື້ແລ້ວ ຜູ້ວ່າ ເຟຊະໂຕ ກໍ
ເວົ້າເລື່ອງ ໂປໂລ ກັບຄະດີຕ່າງໆ ນັ້ນໃຫ້ກະສັດຟັງ ບອກວ່າ “ມີຜູ້ຊາຍຄົນໜຶ່ງ
ເປັນຈຳເລີຍທີ່ອະດີດຜູ້ວ່າ ເຟລິກ ໄດ້ຂັງຖິ້ມໄວ້
25:15 ໃນເລື່ອງຜູ້ນີ້ ບັດຜູ້ຂ້າໄດ້ໄປເມືອງ ເຢຣູຊາເລັມ ຄະນະຫົວໜ້າປະໂລຫິດ
ກັບພວກຜູ້ຫລັກຜູ້ໃຫຍ່ຂອງພວກຢິວຢູ່ຫັ້ນ ມາຟ້ອງຂໍໃຫ້ຜູ້ຂ້າຕັດສິນລົງໂທດ
ເຂົາ
25:16 ຜູ້ຂ້າຈັ່ງຕອບພວກເຂົາວ່າ ‘ບໍ່ແມ່ນລະບຽບການຂອງສານ ໂຣມ ທີ່ຊິມອບຜູ້
ຕ້ອງຫາໃຫ້ສູ່ການລົງໂທດກ່ອນຜູ້ຟ້ອງຄະດີກັບຜູ້ຕ້ອງຫາມາພໍ້ໜ້າກັນ ຈັ່ງໃຫ້ຜູ້
ຕ້ອງຫາມີໂອກາດແກ້ຄະດີໃນຂໍ້ຫານັ້ນ’
25:17 ຈັ່ງຊັ້ນ ບັດພວກເຂົາຜູ້ຟ້ອງຄະດີໄດ້ມາຮອດ ຜູ້ຂ້າບໍ່ໄດ້ຄອຍຖ້າ ແຕ່ບັດມື້ໃ
ໝ່ມາຜູ້ຂ້າໄດ້ຂຶ້ນນັ່ງບັນລັງຕັດສິນ ແລ້ວສັ່ງໃຫ້ນຳຜູ້ຕ້ອງຫາເຂົ້າມາ
25:18 ບັດພວກຜູ້ຟ້ອງຄະດີນັ້ນຢືນຂຶ້ນ ເຂົາບໍ່ໄດ້ເວົ້າກ່າວຫາຜູ້ຕ້ອງຫາ ຕາມຄະດີ
ແນວທີ່ຜູ້ຂ້າຄາດຄິດ
25:19 ເປັນແຕ່ບັນຫາຖຽງກັນຕາມເລື່ອງສາສະໜາຂອງພວກເຂົາເອງ ກັບເລື່ອງ
ຄົນໜຶ່ງທີ່ຊື່ ເຢຊູ ທີ່ຕາຍແລ້ວ ແຕ່ ໂປໂລ ຜູ້ເປັນຜູ້ຕ້ອງຫານັ້ນຢືນຢັນວ່າເພິ່ນຍັງ
ເປັນຢູ່
25:20 ແລ້ວຍ້ອນວ່າຜູ້ຂ້າຍັງບໍ່ທັນແນ່ໃຈວ່າຊິອອກການພິຈາລະນາແບບໃດດີ ຜູ້-
ຂ້າຈັ່ງຖາມ ໂປໂລ ນັ້ນວ່າ ຊິຍອມຂຶ້ນໄປເມືອງ ເຢຣູຊາເລັມ ໃຫ້ຊຳລະຄວາມຢູ່
ນັ້ນຫລືບໍ່
25:21 ແຕ່ບັດ ໂປໂລ ໄດ້ຂໍໄວ້ນີ້ກ່ອນ ແລ້ວຈັ່ງອຸທອນໃຫ້ ກາຍຊາ ໂອຄຸໂຕ ພິຈາ-
ລະນາຕັດສິນເອົາເອງ ຜູ້ຂ້າຈັ່ງສັ່ງໃຫ້ເອົາເຂົາໄວ້ຈົນກວ່າມີໂອກາດສົ່ງໄປເຖິງ
ທ່ານ ກາຍຊາ ”
25:22 ບັດນີ້ ອາຄຣິປາ ເລີຍເວົ້າກັບ ເຟຊະໂຕ ວ່າ “ເຮົາເອງຢາກຊິຟັງຄົນຜູ້ນັ້ນ
ນຳ” ເຟຊະໂຕ ຈັ່ງເວົ້າວ່າ “ມື້ອື່ນທ່ານກໍຊິໄດ້ຟັງເຂົາແລ້ວ”

25:23 ບັດນີ້ອື່ນມາ ອາຄຣິປາ ກັບ ເບນີເກ ໄດ້ມາດ້ວຍສະຫງ່າຜ່າເຜີຍຫລາຍ ຈັ່ງ
ເຂົ້າໄປປະທັບໃນຫ້ອງພິຈາລະນາຕັດສິນ ພ້ອມກັບພວກນາຍພັນ ກັບພວກຄົນ
ສຳຄັນຂອງເມືອງ ແລ້ວ ເຟຊະໂຕ ຈັ່ງສັ່ງໃຫ້ນຳ ໂປໂລ ເຂົ້າມາ
25:24 ແລ້ວ ເຟຊະໂຕ ໄດ້ເວົ້າວ່າ "ທ່ານກະສັດ ອາຄຣິປາ ພ້ອມກັບພວກທ່ານທັງ-
ຫລາຍໃນທີ່ປະຊຸມຢູ່ບ່ອນນີ້ ພວກທ່ານເຫັນຜູ້ຊາຍຄົນນີ້ ເປັນຄົນທີ່ພວກຢິວທັງ
ໃນເມືອງ ເຢຣູຊາເລັມ ກັບຢູ່ນີ້ນຳ ໄດ້ຮ້ອງຂໍຕໍ່ຜູ້ຂ້າ ວ່າ ຜູ້ນີ້ບໍ່ຄວນຊິມີຊີວິດຢູ່ຕໍ່-
ໄປ
25:25 ແຕ່ບັດຜູ້ຂ້າເຫັນວ່າ ຜູ້ຕ້ອງຫານີ້ບໍ່ໄດ້ເຮັດຜິດແນວໜຶ່ງແນວໃດທີ່ສົມຄວນຊິ
ຕາຍ ກັບຍ້ອນໂຕເຂົາເອງໄດ້ອຸທອນເຖິງ ໂອຄຸໂຕ ຜູ້ຂ້າໄດ້ຕົກລົງໃຈວ່າຊິສົ່ງຜູ້
ຕ້ອງຫາໄປເລີຍ ຕາມຄຳອຸທອນຂອງເຂົາ
25:26 ຄື ຜູ້ຂ້າບໍ່ມີຣາຍງານແນ່ຊັດເລື່ອງຄົນນີ້ ທີ່ຊິຖວາຍທ່ານຈັກກະພັດຂອງຜູ້ຂ້າ
ຈັ່ງຊັ້ນຜູ້ຂ້າເລີຍນຳເຂົາອອກມາຕໍ່ໜ້າພວກທ່ານ ແລ້ວໂດຍສະເພາະຢ່າງຍິ່ງຕໍ່
ທ່ານ ກະສັດ ອາຄຣິປາ ຫວັງວ່າບັດທ່ານສອບສວນຜູ້ຕ້ອງຫາຜູ້ນີ້ແລ້ວ ຜູ້ຂ້າຄືຊິ
ມີຂໍ້ມູນພຽງພໍທີ່ຊິຖວາຍຣາຍງານຕໍ່ຈັກກະພັດຂອງຜູ້ຂ້າ
25:27 ຍ້ອນຜູ້ຂ້າເຫັນວ່າ ມັນບໍ່ຄືທີ່ຊິສົ່ງຜູ້ຕ້ອງຫາໄປບໍ່ໆ ໂດຍບໍ່ໄດ້ສົ່ງຂໍ້ຫາໄປນຳ"

## ກິດຈະການ ບົດທີ 26

26:1 ບັດນີ້ ອາຄຣິປາ ຈັ່ງເວົ້າກັບ ໂປໂລ ວ່າ "ເຊີນເລີຍ ເຮົາອະນຸຍາດໃຫ້ເຈົ້າໃຫ້
ການຂໍ້ຫາເອງໄດ້" ແລ້ວ ໂປໂລ ຈັ່ງເດ່ມືອອກມາ ເວົ້າແກ້ຄະດີວ່າ
26:2 "ທ່ານກະສັດ ອາຄຣິປາ ເຈົ້າຂ້າ ຜູ້ຂ້າຮູ້ສຶກດີໃຈທີ່ມີໂອກາດແກ້ຄະດີຕໍ່ໜ້າ
ທ່ານໃນມື້ນີ້ ໃນຂໍ້ຄະດີທັງໝົດນັ້ນທີ່ພວກຢິວກ່າວຫາໃສ່ຜູ້ຂ້າ
26:3 ແມ່ນຍ້ອນວ່າ ທ່ານຊຳນານມີຄວາມຮູ້ຫລາຍໃນຂະໜົບທຳນຽມ ກັບຂໍ້ໂຕ້ຖຽງ
ຕ່າງໆ ຂອງພວກຢິວ ຈັ່ງຊັ້ນຂໍທ່ານໄດ້ໂປດກະລຸນາພະຍາຍາມຟັງຜູ້ຂ້າດ້ວຍ
ຄວາມອົດທົນແດ່
26:4 ພວກ ຊາວຢິວ ທັງຫລາຍໄດ້ຮູ້ເຖິງການໃຊ້ຊີວິດຂອງຜູ້ຂ້າຕັ້ງແຕ່ເປັນເດັກ
ນ້ອຍມາ ຄືທຳອິດມານັ້ນ ພວກເຂົາຮູ້ກັນວ່າຜູ້ຂ້າໄດ້ໃຊ້ຊີວິດຢູ່ກັບຊົນຊາດຂອງ
ຜູ້ຂ້າໃນເມືອງ ເຢຣູຊາເລັມ ແບບໃດ

26:5 ຄືພວກເຂົາຮູ້ຈັກຜູ້ຂ້າດີຕັ້ງແຕ່ທຳອິດມາ ແລ້ວຄັນເຂົາຍອມຢືນຢັນເປັນພະ-
ຍານເຂົາກໍເປັນໄດ້ ທີ່ວ່າ ຜູ້ຂ້າໄດ້ດຳເນີນຊີວິດຕາມຄະນະ ຟາຣີຊາຍ ຊຶ່ງເປັນນິ-
ກາຍທີ່ຖືຢ່າງເຄັ່ງຄັດທີ່ສຸດຕາມສາສະໜາຂອງພວກເຮົາ
26:6 ບັດນີ້ ຜູ້ຂ້າໄດ້ຢືນຢູ່ນີ້ ຖືກການພິຈາລະນາພິພາກສາເນື່ອງຈາກວ່າຜູ້ຂ້າມີ
ຄວາມຫວັງໃນຄຳໝັ້ນສັນຍານັ້ນ ທີ່ພຣະເຈົ້າໄດ້ໂຜດໃຫ້ໄວ້ກັບພວກພໍ່ຕະກູນ
ຂອງພວກຜູ້ຂ້ານັ້ນເນາະ
26:7 ຊຶ່ງເປັນຄຳໝັ້ນສັນຍາທີ່ໃຫ້ໄວ້ກັບເຜົ່າສິບສອງຕະກູນຂອງພວກຜູ້ຂ້າ ທີ່ໄດ້
ພະຍາຍາມຮັບໃຊ້ພຣະເຈົ້າທັງກາງເວັນກາງຄືນ ດ້ວຍມີຄວາມຫວັງວ່າຊິໄດ້ຮັບ
ພົນເປັນສຸກຕາມຄຳໝັ້ນສັນຍານັ້ນ ແລ້ວຍ້ອນຜູ້ຂ້າເຫັນແກ່ຄວາມຫວັງນີ້ເອງ
ທ່ານກະສັດ ອາຄຣິປາ ເອີຍ ຜູ້ຂ້າຈັ່ງຖືກພວກຢິວຟ້ອງຮ້ອງໃສ່
26:8 ຜູ້ຂ້າຂໍຖາມວ່າ ເປັນຫຍັງທ່ານຈັ່ງຄຶດວ່າ ເປັນເລື່ອງເຫລືອເຊື່ອທີ່ພຣະເຈົ້າ
ສາມາດໃຫ້ຄົນຕາຍເປັນຂຶ້ນມາໄດ້
26:9 ຄືແມ່ນແຕ່ຜູ້ຂ້າເອງ ເຄີຍຄຶດວ່າຜູ້ຂ້າຕ້ອງເຮັດຫລາຍແນວທີ່ຊິຕໍ່ຕ້ານພຣະ-
ນາມຂອງ ພຣະເຢຊູ ຊາວ ນາຊາເຣັດ ນັ້ນ
26:10 ຜູ້ຂ້າໄດ້ເຮັດແນວນັ້ນໃນເມືອງ ເຢຣູຊາເລັມ ຄືໄດ້ຮັບມອບອຳນາດຈາກ
ພວກຫົວໜ້າປະໂລຫິດທີ່ຊິຈັບເອົາຄົນດີໆ ຫລາຍຄົນທີ່ເປັນຜູ້ບໍລິສຸດຂອງພຣະ-
ເຈົ້າ ຄຸມຂັງໄວ້ໃນຄຸກ ແລ້ວຜູ້ຂ້າໄດ້ເຫັນດີນຳເຖິງການລົງໂທດໃຫ້ເຂົາຕາຍ
26:11 ຜູ້ຂ້າໄດ້ລົງໂທດເຂົາຫລາຍເທື່ອ ໃນສາລາທຳໝົດຄູ່ໝ້ອງ ກັບໄດ້ບັງຄັບເຂົາ
ໃຫ້ລົບຫລູ່ໝິ່ນປະມາດນຳ ແລ້ວທີ່ວ່າຜູ້ຂ້າເຄີຍຄຽດແຄ້ນເຂົາຢ່າງຮ້າຍແຮງທີ່ສຸດ
ຈົນເຄີຍຕາມລ່າຂົ່ມເຫງເຂົາຮອດເມືອງໃນປະເທດອື່ນໆ ນຳ
26:12 ແລ້ວຕອນພວມເຮັດຢູ່ຫັ້ນ ມີມື້ໜຶ່ງທີ່ຜູ້ຂ້າພວມໄປເມືອງ ດາມາເຊ ໂດຍໄດ້-
ຮັບມອບໝາຍອຳນາດຈາກຄະນະຫົວໜ້າປະໂລຫິດ
26:13 ແລ້ວໃນເວລາທ່ຽງ ຂ້າແຕ່ກະສັດ ເອີຍ ຕອນພວມເດີນທາງຢູ່ ໄດ້ມີແສງຈ້າ
ຫລາຍກວ່າແສງຕະເວັນ ສ່ອງລົງມາຈາກຟ້າສະຫວັນ ອ້ອມໂຕຜູ້ຂ້າໄວ້ ພ້ອມທັງ
ໝູ່ຄົນທີ່ໄດ້ໄປນຳກັນ

26:14 ແລ້ວບັດພວກຜູ້ຂ້ານັ້ນ ພໍລົ້ມລົງດິນ ຜູ້ຂ້າໄດ້ຍິນສຽງທີ່ມີອຳນາດເວົ້າກັບຜູ້-
ຂ້າເປັນພາສາເຮັບເຣີວ່າ ‘ ໂຊໂລ ໆ ເອີຍ ເປັນຫຍັງເຈົ້າຈັ່ງຂົ່ມເຫງເຮົາ ທີ່ເຈົ້າຖີບ
ແສ້ແຫລມນັ້ນ ເຈົ້າກໍຍາກແທ້ເນາະ’
26:15 ຜູ້ຂ້າຈັ່ງຖາມວ່າ ‘ພຣະຜູ້ເປັນເຈົ້າ ເຈົ້າຂ້າ ທ່ານເປັນຜູ້ໃດ’ ເພິ່ນຈັ່ງຕອບວ່າ
‘ເຮົາຄື ເຢຊູ ຜູ້ທີ່ເຈົ້າຂົ່ມເຫງ
26:16 ບັດນີ້ ໃຫ້ເຈົ້າລຸກຂຶ້ນຢືນເດີ້ ທີ່ເຮົາໄດ້ສຳແດງໃຫ້ເຈົ້ານີ້ ກໍຍ້ອນວ່າ ເຮົາຊິຕັ້ງ
ເຈົ້າໄວ້ໃຫ້ເປັນຜູ້ຮັບໃຊ້ ໃຫ້ຢືນຢັນເປັນພະຍານເຖິງເຫດການທີ່ເຈົ້າໄດ້ເຫັນນີ້
ກັບເຖິງເຫດການແນວທີ່ເຮົາຊິສຳແດງໃຫ້ແກ່ເຈົ້າໃນອະນາຄົດນຳ
26:17 ເຮົາຊິກອບກູ້ເຈົ້າໃຫ້ຫລີກເວັ້ນພົ້ນຈາກມືຂອງຄົນຊົນຊາດ ຢິວ ກັບຫລີກ-
ເວັ້ນພົ້ນຈາກຄົນຕ່າງຊາດທີ່ເຮົາຊິໃຊ້ເຈົ້າໄປຫານັ້ນ
26:18 ກໍເພື່ອຊິເປີດຕາໃຈຂອງເຂົາ ກັບເພື່ອເຂົາຊິຫັນອອກຈາກຄວາມມືດມາສູ່
ຄວາມສະຫວ່າງ ກັບຈາກອຳນາດຂອງ ພະຍາມານ ຊາຕານຫັນມາຫາພຣະເຈົ້າ
ເພື່ອເຂົາຊິໄດ້ຮັບການໃຫ້ອະໄພຄວາມຜິດບາບຂອງເຂົາ ຈັ່ງໄດ້ຮັບມໍລະດົກ
ພ້ອມກັບຜູ້ບໍລິສຸດທັງຫລາຍຊຶ່ງຖືກແຍກຕັ້ງໄວ້ໂດຍຄວາມເຊື່ອວາງໃຈໃນເຮົາ’
26:19 ບັດເປັນຈັ່ງຊັ້ນແລ້ວ ຂ້າແຕ່ກະສັດ ອາຄຣິປາ ເອີຍ ຜູ້ຂ້າບໍ່ໄດ້ຂັດຂືນເລີຍ
ແຕ່ໄດ້ເຊື່ອຟັງນິມິດນັ້ນທີ່ມາຈາກສະຫວັນ
26:20 ຜູ້ຂ້າກໍເລີຍຕັ້ງຕົ້ນອອກໄປປະກາດໃຫ້ກັບຄົນ ຢິວ ຢູ່ເມືອງ ດາມາເຊ ກ່ອນ
ກັບໃນເມືອງ ເຢຣູຊາເລັມ ແລ້ວກໍທົ່ວແຄວ້ນ ຢູດາຍ ພ້ອມໄດ້ປະກາດໃຫ້ຊາວ
ຕ່າງຊາດນຳ ວ່າເຂົາຄວນຊິກັບໃຈໃໝ່ ຫັນມາຫາພຣະເຈົ້າ ໃຊ້ຊີວິດໃນທາງທີ່
ສົມກັບວ່າໄດ້ກັບໃຈໃໝ່ແລ້ວ
26:21 ຍ້ອນເຫດນີ້ເນາະພວກຢິວຈັ່ງຈັບຜູ້ຂ້າຢູ່ພຣະວິຫານ ກັບພະຍາຍາມຫາ
ຊ່ອງທາງທີ່ຊິຂ້າຜູ້ຂ້າ
26:22 ແລ້ວເນື່ອງຈາກວ່າພຣະເຈົ້າໄດ້ໂຜດຊ່ອຍເມດຕາຜູ້ຂ້າມາຕະຫລອດຈົນ
ຮອດຄູ່ມື້ນີ້ ຜູ້ຂ້າຈັ່ງຢືນຕັ້ງໄດ້ ເປັນພະຍານຕໍ່ໜ້າຕໍ່ຕາທັງຜູ້ໃຫຍ່ກັບຜູ້ນ້ອຍ ເວົ້າ
ແຕ່ໃນເລື່ອງທີ່ພວກຜູ້ເປັນປາກເປັນສຽງຂອງພຣະເຈົ້າ ກັບແນວທີ່ ໂມເຊ ໄດ້ພະ-
ຍາກອນໄວ້ວ່າຊິມີມານັ້ນ

26:23 ທີ່ວ່າ ພຣະຄຣິດ ຊິຕ້ອງທົນທຸກທໍລະມານ ແລ້ວເພິ່ນຊິເປັນຜູ້ທຳອິດທີ່ຊິເປັນ
ຂຶ້ນມາຈາກຕາຍ ແລ້ວເພິ່ນຈັ່ງປະກາດເລື່ອງແສງສະຫວ່າງໃຫ້ຊົນຊາດ ອິສະຣາ-
ເອນ ກ່ອນ ແລ້ວໃຫ້ຄົນຕ່າງຊາດນຳ"
26:24 ແລ້ວບັດ ໂປໂລ ພວມເວົ້າແກ້ຄະດີຈັ່ງຊັ້ນ ຜູ້ວ່າ ເຟຊະໂຕ ຈັ່ງຮ້ອງສຽງດັ່ງ
ຂຶ້ນມາວ່າ " ໂປໂລ ເອີຍ ເຈົ້າໄດ້ຮຽນພະແນກຫລາຍເກີນ ຈົນຮອດບ້າໄປແລ້ວ"
26:25 ແຕ່ ໂປໂລ ຕອບວ່າ "ທ່ານ ເຟຊະໂຕ ເຈົ້າຂ້າ ຜູ້ຂ້າບໍ່ໄດ້ບ້າຈັກໜ່ອຍເລີຍ
ແຕ່ຄຳທີ່ຜູ້ຂ້າເວົ້ານີ້ປະກອບ ດ້ວຍຄວາມສັດຈິງ ກັບດ້ວຍສະຕິປັນຍາ ຢ່າງມີເຫດ
ມີຜົນ
26:26 ຄືທ່ານກະສັດ ອາຄຣິປາ ໄດ້ຮູ້ຂໍ້ຄວາມແນວໝູ່ນີ້ດີແລ້ວ ຜູ້ຂ້າຈັ່ງກ້າເວົ້າຢ່າງ
ເປີດເຜີຍ ຍ້ອນຜູ້ຂ້າແນ່ໃຈວ່າ ບໍ່ມີຈັກແນວໃນເຫດການໝູ່ນັ້ນໄດ້ພາດພົ້ນຈາກ
ສາຍຕາຂອງທ່ານກະສັດເລີຍ ຍ້ອນວ່າເຫດການແນວໝູ່ນັ້ນບໍ່ໄດ້ເຮັດໃນທີ່ລີ້ລັບ
ດອກ
26:27 ຂ້າແຕ່ກະສັດ ອາຄຣິປາ ເອີຍ ທ່ານເຊື່ອຜູ້ເປັນປາກເປັນສຽງຂອງພຣະເຈົ້າ
ບໍ່ ຜູ້ຂ້າຮູ້ວ່າທ່ານເຊື່ອ"
26:28 ແລ້ວບັດນີ້ ອາຄຣິປາ ຈັ່ງເປີດໃຈຕອບ ໂປໂລ ວ່າ "ຄຳຊັກຊວນຂອງເຈົ້ານີ້
ເກືອບຊິຈູງໃຈເຮົາມາເປັນຄຣິສຕຽນແລ້ວ"
26:29 ແລ້ວ ໂປໂລ ຈັ່ງເວົ້າວ່າ "ຜູ້ຂ້າມີຄວາມປາດຖະໜາດີຕໍ່ພຣະເຈົ້າວ່າ ບໍ່ປາດ-
ຖະໜາໃຫ້ແຕ່ທ່ານຮັບເຊື່ອແຕ່ຜູ້ດຽວ ແຕ່ປາດຖະໜາໃຫ້ໝົດຄູ່ຄົນທີ່ຟັງຜູ້ຂ້າໃນ
ມື້ນີ້ໃຫ້ເປັນຄືກັນກັບຜູ້ຂ້ານີ້ ເວັ້ນແຕ່ເຄື່ອງຈອງຈຳນີ້ທີ່ລ່າມຜູ້ຂ້າໄວ້"
26:30 ບັດພໍ ໂປໂລ ເວົ້າແນວນັ້ນແລ້ວ ກະສັດ ອາຄຣິປາ ກໍລຸກຂຶ້ນ ກັບຜູ້ວ່າລາຊະ-
ການເມືອງ ກັບພະນາງ ເບນີເກ ກັບໝົດຄູ່ຄົນທີ່ນັ່ງຢູ່ນຳກັນນັ້ນ
26:31 ບັດອອກໄປນອກແລ້ວ ໄດ້ປຶກສາຫາລືກັນວ່າ "ຄົນນີ້ບໍ່ໄດ້ເຮັດຜິດອີຫຍັງທີ່
ສົມຄວນຊິຖືກລົງໂທດຮອດຕາຍດອກ ຫລືແມ່ນແຕ່ຖືກຈອງຈຳກໍບໍ່ຄວນ"
26:32 ແລ້ວກະສັດ ອາຄຣິປາ ເວົ້າກັບ ເຟຊະໂຕ ເຖິງ ໂປໂລ ວ່າ "ຄັນຄົນນີ້ບໍ່ໄດ້ອຸ-
ທອນເຖິງຈັກກະພັດ ກາຍຊາ ເຂົາ ອາດ ຊິຖືກປ່ອຍໄປແລ້ວຄືນີ້"

# ກິດຈະການ ບົດທີ 27

27:1 ແລ້ວບັດນີ້ ພັກພວກເຮົາຕັດສິນວ່າ ຄວນຊິລົງເຮືອແລ່ນໄປປະເທດ ອີຕາລີ
ແລ້ວໃນຕອນນັ້ນເຈົ້າໜ້າທີ່ໄດ້ມອບ ໂປໂລ ກັບນັກໂທດຄົນອື່ນໆ ອີກລາງຄົນໄວ້
ກັບຜູ້ຄຸມນັກໂທດ ເປັນນາຍຮ້ອຍຄົນໜຶ່ງຊື່ ຢູລີໂອ ຢູ່ໃນກອງທັບຂອງ ໂອຄຸໂຕ
27:2 ແລ້ວພວກເຮົາໄດ້ໄປລົງເຮືອລຳໜຶ່ງທີ່ມາຈາກເມືອງ ອັດຣາມິດຕຽມ ຈັ່ງອອກ
ແລ່ນໄປຕາມຝັ່ງແຄວ້ນ ເອເຊຍ ແລ້ວມີຄົນໜຶ່ງຢູ່ກັບເຮົາຊື່ວ່າ ອາຣິຊະຕາໂຂ
ມາຈາກເມືອງ ເທຊະໂລນິກ ຢູ່ແຄວ້ນ ມາເກໂດເນຍ
27:3 ບັດມື້ອື່ນເຊົ້າມາ ພວກເຮົາໄດ້ແລ່ນມາແວະຢູ່ເມືອງ ຊີໂດນ ສ່ວນນາຍຮ້ອຍ
ຢູລີໂອ ມີໃຈປານີຕໍ່ ໂປໂລ ເລີຍອະນຸຍາດໃຫ້ ລາວ ຂຶ້ນໄປຫາໝູ່ພີ່ນ້ອງຢູ່ນັ້ນ
ພວກເຂົາຈັ່ງຊ່ອຍຮັກສາເລົ້າໂລມໃຈ ລາວ
27:4 ແລ້ວບັດເຮືອອອກໄປອີກ ຈັ່ງໄດ້ແລ່ນແອບໄປຕາມຝັ່ງທີ່ດ້ານບັງລົມຂອງ
ເກາະ ກຸບໂຣ ຍ້ອນວ່າເຮືອພວມຕ້ານລົມ
27:5 ແລ້ວບັດແລ່ນຂ້າມທະເລຢູ່ກົງແຄວ້ນ ກີລີເກຍ ກັບແຄວ້ນ ປຳຟີເລຍ ກໍມາ
ຮອດເມືອງ ມີຣາ ຢູ່ແຄວ້ນ ລີເກຍ
27:6 ແລ້ວຢູ່ເມືອງນັ້ນ ນາຍຮ້ອຍໄດ້ຫາເຮືອອີກລຳໜຶ່ງມາຈາກເມືອງ ອາເລັກຊັນ-
ເດັຍ ປະເທດ ເອຢິບ ພວມມຸ້ງໜ້າຊິແລ່ນໄປປະເທດ ອີຕາລີ ນາຍຮ້ອຍຈັ່ງໃຫ້
ພວກເຮົາລົງເຮືອລຳນັ້ນ
27:7 ບັດພວກເຮົາແລ່ນໄປຫລາຍມື້ຢ່າງຊ້າໆ ຍ້ອນລົມຕ້ານ ພວກເຮົາຈັ່ງຄ່ອຍມາ
ຮອດເມືອງ ກະນີໂດ ໂດຍຄວາມລຳບາກ ບັດນີ້ ລົມຕ້ານແຮງຂຶ້ນອີກ ຈັ່ງບໍ່ສາ-
ມາດໄປຕໍ່ອີກໄດ້ ພວກເຮົາຈັ່ງແລ່ນແອບໄປຕາມຝັ່ງທີ່ດ້ານບັງລົມຂອງ ເກາະ-
ກະເຣເຕ ກົງເມືອງ ສັນໂມເນ
27:8 ແລ້ວບັດເຮືອແລ່ນເລາະອ້ອມຝັ່ງເກາະນັ້ນຢ່າງລຳບາກ ພວກເຮົາຈັ່ງມາຮອດ
ໜ້ອງໜຶ່ງຊື່ວ່າ ທ່າງາມ ຊຶ່ງຢູ່ໃກ້ເມືອງ ລາເຊ
27:9 ບັດນີ້ ໄດ້ໃຊ້ເວລາຫລາຍແລ້ວ ຈົນຮອດຄັ່ນອັນຕະລາຍ ຈັ່ງສາຍເກີນໄປທີ່ຊິ
ຍ່າງເຮືອຕໍ່ໄປອີກ ແລ້ວຍາມເທດສະການອົດເຂົ້າໄດ້ຜ່ານໄປແລ້ວ ໂປໂລ ຈັ່ງ
ເຕືອນພວກໄທເຮືອໃຫ້ລະວັງໄວ້

27:10 ເວົ້າວ່າ “ພວກເຈົ້າ ເອີຍ ຂ້ອຍເຫັນວ່າ ທີ່ເຮົາແລ່ນເຮືອໄປເທື່ອນີ້ ມັນກໍຊິ
ອັນຕະລາຍຮອດເສຍຫາຍກັນໃຫຍ່ ບໍ່ວ່າແຕ່ຂອງບັນທຸກກັບເຮືອທໍ່ນັ້ນ ແຕ່ມັນຊິ
ອັນຕະລາຍຕໍ່ຊີວິດຂອງພວກເຮົານໍາ”
27:11 ແຕ່ວ່າ ຈັ່ງໃດກໍຕາມ ນາຍຮ້ອຍນັ້ນໄດ້ເຊື່ອນາຍເຮືອກັບເຈົ້າຂອງເຮືອ
ຫລາຍກວ່າເຊື່ອໃນຄໍາເຕືອນຂອງ ໂປໂລ
27:12 ແລ້ວອີກແນວໜຶ່ງ ທ່າງາມນັ້ນບໍ່ເໝາະທີ່ຊິຈອດພັກໃນລະດູໜາວ ແລ້ວຄົນ
ສ່ວງສ່ວນຫລາຍໄດ້ຕົກລົງໃຫ້ອອກເຮືອແລ່ນຕໍ່ຈາກຫັ້ນໄປ ມຸ້ງໜ້າວ່າຢາກໄປ
ຮອດເມືອງ ຝອຍນິກ ຊຶ່ງເປັນທ່າເຮືອຂອງ ເກາະກະເຣເຕ ທີ່ເໝາະດີ ເພື່ອວ່າຄັນ
ເປັນໄປໄດ້ຊິຈອດພັກຢູ່ນັ້ນໃນຍາມລະດູໜາວ ຄືທ່ານັ້ນເປີດອອກໄປທາງທິດເ
ໜືອກັບທິດໃຕ້ນໍາ
27:13 ແລ້ວບັດລົມທິດໃຕ້ພັດມາຄ່ອຍໆ ພວກເຂົາຄຶດວ່າໄດ້ການແລ້ວ ຈັ່ງຖອນ
ສະໝໍແລ່ນແອບຝັ່ງໄປນໍາ ເກາະກະເຣເຕ
27:14 ແຕ່ພໍແລ່ນໄປບໍ່ໂດນ ເຮືອຖືກລົມພະຍຸໃຫຍ່ພັດແຮງ ທີ່ເຂົາເອີ້ນກັນວ່າ “ ຢຸ-
ຣະກີໂລ ” ຊຶ່ງພັດລົງມາຈາກ ເກາະກະເຣເຕ ຢູ່ທາງທິດເໜືອ
27:15 ແລ້ວບັດເຮືອຖືກລົມພະຍຸນັ້ນກໍຕ້ານລົມບໍ່ຢູ່ ຈໍາເປັນພວກເຮົາເລີຍປ່ອຍໃຫ້
ມັນລອຍໄປຕາມກະແສລົມ
27:16 ບັດແລ່ນລອຍໄປທາງຝັ່ງທີ່ດ້ານບັງລົມຂອງເກາະນ້ອຍເກາະໜຶ່ງຊື່ ຄາວ-
ດາ ເຮົາຈັ່ງຍົກເຮືອຊູຊີບລໍານ້ອຍຂຶ້ນຜູກໄວ້ໄດ້ໂດຍຄວາມຍາກລໍາບາກ
27:17 ບັດພໍຍົກເຮືອຊູຊີບນ້ອຍນັ້ນຂຶ້ນມາແລ້ວ ພວກເຂົາໄດ້ເອົາເຊືອກຜູກລັດໄວ້
ອ້ອມທ້ອງເຮືອໃຫ້ແຂງແຮງຂຶ້ນ ຢ້ານວ່າທ້ອງເຮືອຊິໄຫລໄປຄ້າງຫາດຊາຍເລີຍ
ປົດໃບເຮືອລົງໄວ້ ເຮືອຈັ່ງຖືກລາກໄປຕາມກະແສລົມ
27:18 ແລ້ວພວກເຮົາໄດ້ຖືກຊັດໄປຊັດມາຢ່າງແຮງ ຍ້ອນຖືກລົມພະຍຸໃຫຍ່ ບັດພໍມື້
ໃໝ່ມາ ລູກເຮືອໄດ້ຂົນຂອງບັນທຸກຖິ້ມລົງທະເລ
27:19 ບັດມາຮອດມື້ທີ່ສາມ ພວກເຮົາກໍໄດ້ຖິ້ມອຸປະກອນເຄື່ອງໃຊ້ຕ່າງໆ ຂອງເຮືອ
ອອກໄປໂດຍມືພວກເຮົາເອງ

27:20 ແລ້ວບັດບໍ່ເຫັນຮອດຕະເວັນຫລືພວກດາວຕັ້ງຫລາຍມື້ແລ້ວ ກໍຍັງຖືກພາຍຸ
ໃຫຍ່ໜັກເຂົ້າໄປອີກ ຄວາມຫວັງທີ່ເຮົາຊິໄດ້ລອດຊີວິດກໍໝົດໄປ
27:21 ແລ້ວບັດ ໂປໂລ ໄດ້ອົດອາຫານ ມາໂດນ ລາວ ຈັ່ງຢືນຢູ່ກາງໝູ່ເວົ້າວ່າ
"ພວກເຈົ້າຄວນໄດ້ຟັງຄວາມຂ້ອຍ ແລ້ວບໍ່ຄວນອອກຈາກ ເກາະກະເຣເຕ ເລີຍ
ຈັ່ງຊິບໍ່ໄດ້ຖືກແນວຜິດແນວໄພກັບການເສຍຫາຍໃຫຍ່ຈັ່ງຊີ້
27:22 ບັດນີ້ ຂ້ອຍຂໍໃຫ້ພວກເຈົ້າດີໃຈໄວ້ເດີ້ ຄືບໍ່ມີໃຜຊິເສຍຊີວິດຈັກຄົນເລີຍ ມີແຕ່
ເຮືອເທົ່ານັ້ນທີ່ຊິພັງ
27:23 ຍ້ອນວ່າມື້ຄືນນີ້ ມີເທວະທູດອົງໜຶ່ງຂອງພຣະເຈົ້າ ຜູ້ເພິ່ນທີ່ຂ້ອຍໄດ້ຮັບໃຊ້ນີ້
ໄດ້ມາຢືນຢູ່ນຳຂ້ອຍ
27:24 ແລ້ວຈັ່ງເວົ້າວ່າ ' ໂປໂລ ເອີຍ ຢ່າຊູ່ຢ້ານເລີຍເດີ້ ເຈົ້າຊິຕ້ອງເຂົ້າເຝົ້າຈັກກະ-
ພັດ ກາຍຊາ ຢູ່ດອກ ນີ້ແຫລະ ພຣະເຈົ້າຊິໂຜດໃຫ້ໝົດຄູ່ຄົນທີ່ແລ່ນເຮືອນຳເຈົ້າ
ປອດໄພຍ້ອນເຈົ້າ'
27:25 ຈັ່ງຊັ້ນ ໃຫ້ພວກເຈົ້າດີໃຈໄວ້ເດີ້ ຍ້ອນຂ້ອຍເຊື່ອໝັ້ນໃນພຣະເຈົ້າວ່າ ມັນຊິ
ເປັນໄປຕາມທີ່ເພິ່ນໄດ້ບອກຂ້ອຍໄວ້ແລ້ວນັ້ນ
27:26 ຈັ່ງໃດກໍດີ ພວກເຮົາຊິຕ້ອງຄ້າງເກາະໜ້ອງໜຶ່ງ"
27:27 ແລ້ວຢູ່ມາບັດຮອດຄືນທີ່ສິບສີ່ແລ້ວ ພວກເຮົາກໍຍັງຖືກຊັດຂຶ້ນໆ ລົງໆ ຢູ່ໃນ
ທະເລ ອັດເຣຍ ນັ້ນ ແລ້ວປະມານທ່ຽງຄືນ ພວກລູກເຮືອຮູ້ສຶກວ່າ ໄດ້ມາໃກ້ຝັ່ງ
ແຜ່ນດິນໜ້ອງໃດໜ້ອງໜຶ່ງແລ້ວ
27:28 ບັດຢັ່ງເບິ່ງກໍວັດແທກໄດ້ເລິກສີ່ສິບແມັດ ແລ້ວບັດໄປອີກໜ່ອຍໜຶ່ງກໍຢັ່ງວັດ-
ແທກອີກຈັ່ງໄດ້ແຄ່ສາມສິບແມັດ
27:29 ເຂົາກໍເກີດຢ້ານວ່າຊິຖືກຝັ່ງທີ່ມີກ້ອນຫີນໃຫຍ່ ຈັ່ງທອດສະໝໍສີ່ໂຕໄວ້ຢູ່
ທ້າຍເຮືອ ແລ້ວຄອຍຖ້າທ່າຂໍຮ້ອງໃຫ້ມັນຊອດແຈ້ງໄວໆ
27:30 ແລ້ວບັດພວກລູກເຮືອມີຄວາມຕັ້ງໃຈຊິໜີຈາກເຮືອໄປ ຄືພວກເຂົາໄດ້ຢ່ອນ
ເຮືອຊູຊີບລຳນ້ອຍລົງທະເລ ກຽມຊິທອດສະໝໍລົງທີ່ຫົວເຮືອ
27:31 ສ່ວນ ໂປໂລ ຈັ່ງບອກນາຍຮ້ອຍກັບພວກທະຫານຢູ່ຫັ້ນວ່າ "ຄັ່ນພວກລູກ
ເຮືອບໍ່ຢູ່ໃນເຮືອນຳ ພວກເຈົ້າຊິລອດຕາຍບໍ່ໄດ້ເລີຍ"

27:32 ຝ່າຍພວກທະຫານຈັ່ງຕັດເຊືອກທີ່ຜູກເຮືອລຳນ້ອຍໃຫ້ມັນຕົກລົງໄປ
27:33 ບັດໃກ້ຊິຮອດແຈ້ງແລ້ວ ໂປໂລ ຈັ່ງວິງວອນໝົດຄູ່ຄົນໃຫ້ກິນເຂົ້າກັບເວົ້າຕໍ່
ອີກວ່າ "ມື້ນີ້ເປັນມື້ທີ່ສິບສີ່ແລ້ວ ທີ່ພວກເຈົ້າອົດແນວກິນ ບໍ່ໄດ້ກິນອີຫຍັງເລີຍ
27:34 ຈັ່ງຊັ້ນຂ້ອຍຂໍຮ້ອງໃຫ້ພວກເຈົ້າກິນຊະເດີ້ ເພື່ອຮັກສາສຸກຂະພາບໂຕໄວ້
ຍ້ອນວ່າຊິບໍ່ມີເສັ້ນຜົມຈັກເສັ້ນຂອງພວກເຈົ້າທີ່ຊິຫລົ່ນຫາຍໄປຈາກຫົວເຈົ້າ"
27:35 ບັດເວົ້າຈັ່ງຊັ້ນແລ້ວ ລາວ ໄດ້ຈັບເຂົ້າຈີ່ຂຶ້ນມາ ແລ້ວຈັ່ງຂອບໃຈພຣະເຈົ້າຕໍ່-
ໜ້າຕໍ່ຕາໝົດຄູ່ຄົນຢູ່ນັ້ນ ບັດບິແລ້ວກໍກິນ
27:36 ແລ້ວຄົນອື່ນໆ ທັງໝົດກໍມີແຮງຊື່ນໃຈນຳ ຈັ່ງໄດ້ກິນເຂົ້າຄືກັນ
27:37 ແລ້ວຈຳນວນຄົນເຮົາທີ່ຢູ່ໃນເຮືອນັ້ນ ຮ່ວມກັນທັງໝົດມີຢູ່ສອງຮ້ອຍເຈັດສິບ
ຫົກຄົນ
27:38 ບັດກິນເຂົ້າອີ່ມແລ້ວ ເຂົາຈັ່ງຂົນເຂົ້າວີດໃນເຮືອອອກມາຖິ້ມລົງໃນທະເລ
ເພື່ອໃຫ້ເຮືອເບົາຂຶ້ນ
27:39 ແລ້ວບັດຮອດແຈ້ງ ພໍເບິ່ງແລ້ວເຂົາບໍ່ສາມາດເບິ່ງອອກໄດ້ວ່າເປັນເຂດໃດ
ແຕ່ເຂົາໄດ້ເຫັນອ່າວໜ້ອງໜຶ່ງທີ່ມີຫາດ ຈັ່ງຕົກລົງກັນວ່າຄັ່ນເປັນໄປໄດ້ກໍຊິເອົາ
ເຮືອເຂົ້າໄປຄ້າງຫາດນັ້ນ
27:40 ແລ້ວພວກເຂົາຈັ່ງປະສະໝໍຖິ້ມລົງທະເລ ແລ້ວກໍແກ້ເຊືອກທີ່ມັດຫາງເສືອ
ກັບຊັກໃບເຮືອໃຫຍ່ຂຶ້ນໃຫ້ກິນລົມ ແລ່ນກົງເຂົ້າໄປຫາຝັ່ງນັ້ນ
27:41 ແຕ່ພໍແລ່ນມາຮອດປາກອ່າວແລ້ວ ໄດ້ເຈີຊ່ອງແຄບໜ້ອງຫາດທະເລມາໃກ້
ກັນ ເຮືອກໍເລີຍຄ້າງດິນຈົນຫົວເຮືອຕິດແໜ້ນຢູ່ຫັ້ນ ແຕ່ທ້າຍເຮືອກໍແຕກພັງໄປ
ຍ້ອນຖືກກຳລັງຄື້ນຊັດຢ່າງແຮງ
27:42 ພວກທະຫານຕົກລົງວ່າຊິຂ້າພວກນັກໂທດ ຢ້ານຊິມີຜູ້ໃດລອຍນ້ຳໜີອອກ
ໄປໄດ້
27:43 ແຕ່ຝ່າຍນາຍຮ້ອຍນັ້ນ ລາວ ຢາກຊິໃຫ້ ໂປໂລ ລອດຕາຍ ເລີຍຫ້າມພວກ
ທະຫານບໍ່ໃຫ້ເຮັດຕາມເປົ້າໝາຍນັ້ນ ແລ້ວສັ່ງຄົນທັງຫລາຍທີ່ລອຍນ້ຳເປັນ ໃຫ້
ໂດດນ້ຳລອຍເຂົ້າໄປຫາຝັ່ງກ່ອນ

27:44 ຝ່າຍຄົນອື່ນໆ ນັ້ນ ຜູ້ລາງຄົນໄດ້ກອດໄມ້ແປ້ນເຮືອ ແລ້ວອີກຜູ້ລາງຄົນກໍໄດ້
ກອດເອົາໄມ້ທ່ອນສ່ວນອື່ນໆ ຂອງເຮືອພາກັນລອຍອອກໄປ ຈັ່ງຊັ້ນໝົດຄູ່ຄົນໄດ້
ລອດຕາຍ ໄປຮອດຝັ່ງດ້ວຍຄວາມປອດໄພ

# ກິດຈະການ ບົດທີ 28

28:1 ບັດພວກເຂົາຂຶ້ນເກາະລອດພົ້ນໄພແລ້ວ ເຂົາຈັ່ງຮູ້ວ່າເກາະນັ້ນຊື່ ເມລະຕາ
28:2 ແລ້ວຝ່າຍຊາວເກາະນັ້ນກໍມີຄວາມກະລຸນາຕໍ່ພວກເຮົາບໍ່ນ້ອຍ ກໍເລີຍດັງໄຟ
ຕ້ອນຮັບເຮົາຄູ່ຄົນ ຍ້ອນຝົນພວມຕົກແລ້ວອາກາດກໍໜາວ
28:3 ແລ້ວບັດ ໂປໂລ ໄດ້ເກັບຟືນມັດໜຶ່ງມາວາງໃສ່ໄຟ ພໍດີມີງູພິດໂຕໜຶ່ງພໍຖືກ
ຄວາມຮ້ອນກໍກະດຸກກະດິກອອກມາຈາກຟືນນັ້ນ ກັດມືຂອງ ໂປໂລ ຄາບງັບໄວ້ບໍ່
ປ່ອຍເລີຍ
28:4 ບັດພວກຊາວເກາະເຫັນງູຫ້ອຍຕິດມື ໂປໂລ ນັ້ນ ຈັ່ງເວົ້າກັນວ່າ “ຄົນນີ້ຄວນຊິ
ເປັນຄາດຕະກອນຄັກແນ່ ເຖິງແມ່ນວ່າລອດພົ້ນຈາກທະເລແລ້ວ ກຳເວນຂອງ
ເຂົາບໍ່ຍອມໃຫ້ລອດຕາຍໄປໄດ້ເລີຍ”
28:5 ແຕ່ ໂປໂລ ກໍສັ່ນມືໃຫ້ງູຕົກລົງໄປໃນໄຟ ແລ້ວຜູ້ບໍ່ໄດ້ເປັນອັນຕະລາຍຈັກ-
ໜ່ອຍ
28:6 ແຕ່ຝ່າຍພວກຄົນຊາວເກາະກໍຄອຍຖ້າຢູ່ ຄຶດວ່າມື ລາວ ຊິຕ້ອງໄຂ່ຂຶ້ນມາ ຫລື
ຊິຕ້ອງລົ້ມລົງຕາຍກັບໜ້ອງ ແຕ່ບັດພວກເຂົາຖ້າເບິ່ງໂດນເຕີບກໍບໍ່ເຫັນ ລາວ
ເປັນອີຫຍັງ ພວກເຂົາຈັ່ງກັບຖືວ່າ ລາວ ຕ້ອງເປັນເທບເຈົ້າແນວໃດແນວໜຶ່ງ
28:7 ແລ້ວໃນບໍລິເວນນັ້ນ ເປັນທີ່ຂອງຫົວໜ້າເກາະຊື່ວ່າ ປົບລີໂອ ຜູ້ນີ້ມີໄຮ່ນາມີ
ເຂົ້າຂອງເງິນທອງຫລາຍ ແລ້ວເຂົາໄດ້ຕ້ອນຮັບລ້ຽງພວກເຮົາໄວ້ຢ່າງດີເປັນເວ-
ລາສາມມື້ເຕັມ
28:8 ແລ້ວມັນເປັນທີ່ວ່າ ພໍ່ຂອງ ປົບລີໂອ ນັ້ນນອນປ່ວຍຢູ່ ເປັນໄຂ້ກັບເປັນພະ-
ຍາດທ້ອງບິດຢ່າງແຮງນຳ ໂປໂລ ຈັ່ງເຂົ້າໄປຫາເຂົາແລ້ວກໍອະທິຖານວອນຂໍນຳ
ພຣະເຈົ້າ ແລ້ວວາງມືເທິງເຂົາ ຈັ່ງໄດ້ເຊົາເປັນດີ ໂລດ
28:9 ບັດເຮັດຈັ່ງຊັ້ນແລ້ວ ຄົນອື່ນໆ ຢູ່ເກາະນັ້ນທີ່ມີໂລກໄພໄຂ້ເຈັບຕ່າງໆ ກໍມາຫາ
ໂປໂລ ແລ້ວກໍໄດ້ຮັບການປົວເຊົາເປັນດີຄືກັນ

28:10 ພວກເຂົາຈັ່ງໃຫ້ກຽດພວກເຮົາຫລາຍໆ ຢ່າງ ບັດເຮົາພ້ອມຊິແລ່ນເຮືອອີກ
ລຳໜຶ່ງອອກຈາກຫັ້ນໄປ ເຂົາກໍເອົາສິ່ງຂອງອອກມາຫລາຍແນວຖວາຍໃຫ້ຕາມທີ່
ເຮົາຕ້ອງການຕອນຊິອອກໄປ
28:11 ຫລັງຈາກສາມເດືອນ ພວກເຮົາຈັ່ງລົງເຮືອທີ່ແລ່ນມາຈາກເມືອງ ອາເລັກຊັນ-
ເດັຍ ເປັນເຮືອທີ່ຈອດຄ້າງຢູ່ເກາະນັ້ນຕອນລະດູໜາວ ເຮືອລຳນັ້ນມີຮູບເທບເຈົ້າ
ແກະສະຫລັກໄວ້ທີ່ຫົວເຮືອ ເປັນຝາແຝດຊື່ ຄັດຊະໂຕ ກັບ ໂພລັກ
28:12 ຢູ່ມາພວກເຮົາໄດ້ແວະເມືອງ ຊູຣະກູຊະ ຈອດໄວ້ຢູ່ຫັ້ນສາມມື້
28:13 ແລ້ວຈາກຫັ້ນ ພວກເຮົາໄດ້ແລ່ນອ້ອມໄປເມືອງ ເຣຄີໂອມ ແລ້ວອີກມື້ໜຶ່ງລົມ
ທິດໃຕ້ກໍພັດມາ ແລ້ວມື້ທີ່ສອງຈັ່ງມາຮອດເມືອງ ໂປຕີໂອລີ
28:14 ໃນເມືອງນັ້ນເຮົາໄດ້ຮັບກັນກັບພວກພີ່ນ້ອງ ທີ່ໄດ້ເຊີນພວກເຮົາໃຫ້ພັກຢູ່ກັບ
ເຂົາເຈັດມື້ ຫລັງຈາກນັ້ນພວກເຮົາຈັ່ງມຸ້ງໜ້າແລ່ນໄປທາງ ໂຣມ
28:15 ບັດພວກພີ່ນ້ອງໃນ ໂຣມ ໄດ້ຍິນຂ່າວເຖິງພວກເຮົາ ພວກເຂົາຈັ່ງເດີນທາງ
ອອກມາຕ້ອນຮັບພວກເຮົາຢູ່ໜ້ອງຕະຫລາດ ອາປີໂອ ກັບຢູ່ໜ້ອງສາມໂຮງແຮມ
ບັດ ໂປໂລ ເຫັນເຂົາ ລາວ ເລີຍຂອບໃຈພຣະເຈົ້າ ມີກຳລັງໃຈຫລາຍຂຶ້ນ
28:16 ບັດພວກເຮົາມາຮອດ ໂຣມ ແລ້ວ ນາຍຮ້ອຍໄດ້ມອບພວກນັກໂທດໄວ້ກັບຜູ້
ບັນຊາການຢູ່ຫັ້ນ ແຕ່ສ່ວນ ໂປໂລ ນາຍຮ້ອຍອະນຸຍາດໃຫ້ ລາວ ຢູ່ຄົນດຽວ ກັບມີ
ທະຫານຄົນໜຶ່ງເບິ່ງແຍງ ລາວ ໄວ້
28:17 ແລ້ວມັນເປັນໄປທີ່ວ່າ ຫລັງຈາກສາມມື້ ໂປໂລ ຈັ່ງເຊີນພວກຜູ້ຫລັກຜູ້ໃຫຍ່
ໃນພວກຢິວຢູ່ຫັ້ນໃຫ້ມາຕຸ້ມໂຮມກັນ ບັດພວກເຂົາມາພ້ອມໜ້າພ້ອມຕາກັນແລ້ວ
ລາວ ຈັ່ງບອກເຂົາວ່າ “ທ່ານພີ່ນ້ອງທັງຫລາຍ ເອີຍ ແມ່ນແຕ່ຂ້ອຍບໍ່ໄດ້ເຮັດຜິດ
ອີຫຍັງຕໍ່ຊົນຊາດເຮົາ ຫລືຕໍ່ທຳນຽມອັນດີງາມຂອງພໍ່ຕະກູນເຮົາ ຂ້ອຍກໍຍັງຖືກ
ມອບໄວ້ເປັນນັກໂທດມາຈາກເມືອງ ເຢຣູຊາເລັມ ຖືກຝາກໄວ້ໃນມືຂອງພວກ
ໂຣມ
28:18 ແລ້ວບັດພວກເຂົາໄດ້ສອບສວນຂ້ອຍແລ້ວ ເຂົາວ່າຊິປ່ອຍຂ້ອຍໄປ ຍ້ອນບໍ່
ມີເຫດອີຫຍັງທີ່ຂ້ອຍຄວນຊິຕ້ອງຖືກປະຫານ

28:19 ແຕ່ວ່າບັດພວກຢິວຢູ່ນັ້ນຄັດຄ້ານ ຂ້ອຍເລີຍຕ້ອງອຸທອນເຖິງຈັກກະພັດ
ກາຍຊາ ບໍ່ແມ່ນວ່າຂ້ອຍມີແນວຊິຟ້ອງຄົນຮ່ວມຊາດຂອງຂ້ອຍດອກ
28:20 ຍ້ອນເຫດນີ້ເນາະ ຂ້ອຍຈັ່ງເຊີນພວກເຈົ້າມາເພື່ອຊິໄດ້ເຫັນໜ້າຄ່າຕາກັນ
ກັບຢາກເວົ້າກັບພວກເຈົ້ານຳ ຄືຂ້ອຍໄດ້ຖືກລ່າມໂສ້ໄວ້ແນວນີ້ ຍ້ອນຂ້ອຍເຫັນ
ແກ່ຄວາມຫວັງຂອງຊົນຊາດ ອິສະຣາເອນ ເຮົາ”
28:21 ພວກເຂົາຈັ່ງຕອບ ລາວ ວ່າ “ພວກເຮົາບໍ່ໄດ້ຮັບຈົດໝາຍຈາກແຄວ້ນ ຢູດາຍ
ເຖິງເລື່ອງເຈົ້າ ແລ້ວກໍບໍ່ມີພວກພີ່ນ້ອງຜູ້ໜຶ່ງຜູ້ໃດມາຣາຍງານຫລືເວົ້າຮ້າຍໃສ່
ເຈົ້າດອກ
28:22 ແຕ່ວ່າພວກຂ້ອຍກໍຢາກຊິຟັງເຈົ້າອະທິບາຍວ່າມີຄວາມຄຶດເຫັນຈັ່ງໃດ ຍ້ອນ
ພວກຂ້ອຍຮູ້ແຕ່ວ່າ ພວກທີ່ຖືນອກຮີດນອກຮອຍທາງນີ້ກໍຖືກຕິຕຽນ ຕໍ່ຕ້ານຢູ່ຄູ່
ໜ້ອງ”
28:23 ແລ້ວບັດນັດມື້ໄວ້ ມີຫລາຍຄົນມາຟັງ ໂປໂລ ຢູ່ທີ່ພັກຂອງ ລາວ ລາວ ຈັ່ງ
ອະທິບາຍຢ່າງຈິງຈັງໃຫ້ເຂົາຟັງຕັ້ງແຕ່ເຊົ້າໄປຫາຄ່ຳ ເປັນພະຍານເຖິງລາຊະ-
ອານາຈັກຂອງພຣະເຈົ້າ ພະຍາຍາມຊັກຊວນຈູງໃຈພວກເຂົາໃນເລື່ອງ ພຣະເຢ-
ຊູ ໂດຍຊີ້ແຈງຂໍ້ຄວາມຈາກກົດບັນຍັດຂອງ ໂມເຊ ກັບຈາກໜັງສືຂອງຜູ້ເປັນ-
ປາກເປັນສຽງຂອງພຣະເຈົ້ານຳ
28:24 ແລ້ວໃນຄົນໝູ່ນັ້ນ ຝ່າຍໜຶ່ງຍອມຮັບໃນຄວາມເວົ້າຂອງ ລາວ ວ່າແມ່ນ ແຕ່
ອີກຝ່າຍໜຶ່ງວ່າບໍ່ແມ່ນ
28:25 ແລ້ວເນື່ອງຈາກວ່າ ພວກຄົນ ຢິວ ນັ້ນບໍ່ສາມາດລົງລອຍຕົກລົງກັນໄດ້ໃນ
ເລື່ອງນີ້ກໍເລີຍລາກັນໄປ ແຕ່ກ່ອນລາໄປຫັ້ນ ໂປໂລ ໄດ້ແຖມ ພຣະຄຳ ອີກຂໍ້ໜຶ່ງ
ໃຫ້ເຂົາວ່າ “ ພຣະວິນຍານ ໄດ້ເວົ້າຖືກຕ້ອງພໍແຮງແລ້ວຕໍ່ພວກພໍ່ຕະກູນຂອງ
ພວກເຮົາ ໂດຍຜ່ານທາງຄຳພະຍາກອນຂອງ ເອຊາຢາ
28:26 ວ່າ ‘ໃຫ້ໄປຫາຊົນຊາດຂອງເຮົານີ້ກັບເວົ້າວ່າ “ພວກເຈົ້າຊິຟັງໄດ້ຍິນຢູ່ ແຕ່ຊິ
ບໍ່ເຂົ້າໃຈ ຊິເບິ່ງເຫັນຢູ່ ແຕ່ມັນຊິບໍ່ຊອດເລີຍ
28:27 ຍ້ອນວ່າຈິດໃຈຂອງຄົນຊາດນີ້ກໍແຂງກະດ້າງໄປ ກັບຫູຂອງເຂົາກໍຕັນປຶກ
ທັງຕາຂອງເຂົາກໍປິດລົງ ບໍ່ຊັ້ນພວກເຂົາ ອາດ ເຫັນກັບຕາ ກັບ ອາດ ໄດ້ຍິນກັບຫູ

ເຖິງ ອາດ ເຂົ້າໃຈດີດ້ວຍຈິດໃຈຂອງເຂົາແລ້ວຫັນມາຫາ ເພື່ອເຮົາຊິປົວເຂົາໃຫ້
ເຊົາເປັນດີ"'
28:28 ຈັ່ງຊັ້ນ ຂໍໃຫ້ພວກເຈົ້າຮູ້ກັນວ່າ ເລື່ອງຄວາມພົ້ນຂອງພຣະເຈົ້ານັ້ນ ໄດ້ສົ່ງໄປ
ຮອດຄົນຕ່າງຊາດແລ້ວ ແລ້ວພວກເຂົາຊິຮັບຟັງ ໂລດ "
28:29 ແລ້ວບັດ ໂປໂລ ໄດ້ເວົ້າຈົບແລ້ວ ພວກຢິວນັ້ນກໍຈາກໄປ ຈັ່ງໄດ້ໂຕ້ຖຽງກັນ
ຢ່າງໃຫຍ່ລະຫວ່າງພວກເຂົາເອງໃນເລື່ອງນີ້
28:30 ສ່ວນ ໂປໂລ ຈັ່ງໄດ້ອາໄສຢູ່ໃນເຮືອນເຊົ່າຂອງ ລາວ ນັ້ນຄົບສອງປີເຕັມ ກັບ
ໄດ້ຕ້ອນຮັບໝົດຄູ່ຄົນທີ່ມາຫາ ລາວ
28:31 ທັງປະກາດເລື່ອງລາຊະອານາຈັກຂອງພຣະເຈົ້າ ກັບສອນຫລັກຂໍ້ຕ່າງໆ
ກ່ຽວກັບພຣະເຢຊູຄຣິດເຈົ້ານຳ ຊີ້ແຈງໂດຍຄວາມໝັ້ນໃຈ ຈັ່ງບໍ່ມີໃຜຂັດຂວາງ
ຫ້າມເລີຍ

# ໂຣມ

## ໂຣມ ບົດທີ 1

1:1 ຈາກ ໂປໂລ ຜູ້ຮັບໃຊ້ຂອງ ພຣະເຢຊູຄຣິດ ທີ່ພຣະເຈົ້າໄດ້ເອີ້ນໄດ້ເຊີນມາ
ໃຫ້ເປັນທູດພິເສດ ໄດ້ແຕ່ງຕັ້ງເອົາໄວ້ເພື່ອຂ່າວປະເສີດອັນດີງາມຂອງເພິ່ນ
1:2 (ຊຶ່ງພຣະເຈົ້າໄດ້ສັນຍາໄວ້ລ່ວງໜ້າໃນສະໄໝກ່ອນໆ ຜ່ານທາງຜູ້ເປັນປາກ-
ເປັນສຽງໃນ ພຣະຄຳ ອັນສັກສິດບໍລິສຸດຂອງເພິ່ນ)
1:3 ຊຶ່ງຂ່າວປະເສີດນີ້ກໍເວົ້າເຖິງ ພຣະບຸດ ຂອງພຣະເຈົ້າ ຄືພຣະເຢຊູຄຣິດເຈົ້າ
ຂອງພວກເຮົານັ້ນ ຜູ້ເພິ່ນທີ່ເກີດມາໃນວົງຕະກູນຂອງກະສັດ ດາວິດ
1:4 ແລ້ວໄດ້ປະກາດເຖິງເພິ່ນວ່າເປັນ ພຣະບຸດ ຂອງພຣະເຈົ້າທີ່ເປັນຂຶ້ນມາຈາກ
ຕາຍ ໂດຍທາງລິດອຳນາດຂອງ ພຣະວິນຍານ ສັກສິດບໍລິສຸດ
1:5 ແລ້ວໂດຍ ພຣະບຸດ ນັ້ນເອງ ພວກເຮົາຈັ່ງໄດ້ຮັບພຣະກະລຸນາທິຄຸນກັບການ
ແຕ່ງຕັ້ງເປັນທູດພິເສດຂອງເພິ່ນ ເພື່ອຄົນຄູ່ຊາດຊິໄດ້ເຊື່ອຟັງ ເຖິງວາງໃຈໃນ
ພຣະນາມຂອງ ພຣະເຢຊູຄຣິດ
1:6 ຮ່ວມທັງພວກເຈົ້ານຳ ເປັນຜູ້ທີ່ໄດ້ເອີ້ນໄດ້ເຊີນມາໂດຍທາງ ພຣະເຢຊູຄຣິດ

1:7 ຈັ່ງຊຽນພີ່ນ້ອງທີ່ຮັກແພງຂອງພຣະເຈົ້າຄູ່ຄົນຢູ່ ໂຣມ ຊຶ່ງໄດ້ເອີ້ນວ່າເປັນຄົນ
ບໍລິສຸດຂອງເພິ່ນ ຂໍໃຫ້ພຣະກະລຸນາທິຄຸນກັບສັນຕິພາບຈາກພຣະເຈົ້າ ຜູ້ເປັນພໍ່
ຂອງເຮົາ ກັບຈາກພຣະເຢຊູຄຣິດເຈົ້າ ດຳລົງຢູ່ກັບພວກເຈົ້າເຖີ້ນ
1:8 ກ່ອນຢ່າງອື່ນ ຂ້ອຍຂໍຂອບໃຈພຣະເຈົ້າຂອງຂ້ອຍໂດຍທາງ ພຣະເຢຊູຄຣິດ
ຂອບໃຈເພື່ອພວກເຈົ້າຄູ່ຄົນຍ້ອນວ່າຄວາມເຊື່ອຂອງພວກພີ່ນ້ອງໄດ້ເລື່ອງລືໄປ
ຮອດທົ່ວຄູ່ໝ້ອງແລ້ວ
1:9 ຄືພຣະເຈົ້າ ຜູ້ທີ່ຂ້ອຍຮັບໃຊ້ຢ່າງສຸດຈິດສຸດໃຈໃນການປະກາດຂ່າວປະເສີດ
ເລື່ອງ ພຣະບຸດ ຂອງເພິ່ນ ເພິ່ນກໍເປັນພະຍານໄດ້ວ່າ ຂ້ອຍອະທິຖານເວົ້ານຳ
ພຣະເຈົ້າ ເອີ່ຍເຖິງພວກເຈົ້າຢູ່ສະເໝີ
1:10 ແລ້ວຂ້ອຍຂໍນຳພຣະເຈົ້າວ່າ ຄັ່ນເປັນໄປຕາມພຣະປະສົງຂອງເພິ່ນ ຂໍໃຫ້
ຂ້ອຍໄດ້ມີໂອກາດແນວໃດແນວໜຶ່ງທີ່ຊິໄປຢ້ຽມຢາມພວກເຈົ້າໃນທີ່ສຸດນີ້
1:11 ຄືຂ້ອຍປວດໃຈຢາກມາຫາພວກເຈົ້າ ເພື່ອແບ່ງປັນພົນສະຫວັນພິເສດຝ່າຍ
ວິນຍານຈາກພຣະເຈົ້າລາງແນວ ເພື່ອສົ່ງເສີມພີ່ນ້ອງໃຫ້ໝັ້ນຄົງຂຶ້ນໃນທີ່ສຸດ
1:12 ຄື ເພື່ອໂຕຂ້ອຍກັບພວກເຈົ້າໂດຍຄວາມເຊື່ອທັງສອງຝ່າຍຊິຊ່ອຍໜຸນກຳລັງ
ໃຈຊຶ່ງກັນແລະກັນ
1:13 ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍຢາກໃຫ້ພວກເຈົ້າຮູ້ກັນວ່າ ຂ້ອຍນີ້ໄດ້ໝ
າຍໄວ້ຊິໄປຫາຫລາຍເທື່ອແລ້ວ ເພື່ອຊິໄດ້ເກີດຜົນຢູ່ນຳພວກເຈົ້າ ຄືກັນກັບພວກ
ຄົນຊາດອື່ນໆ (ແຕ່ມີການຂັດຂວາງໄວ້ຢູ່ຈົນຮອດເທື່ອນີ້)
1:14 ຄືຂ້ອຍຖືວ່າເປັນໜີ້ໝົດຄູ່ຄົນ ບໍ່ວ່າຊິເປັນຊາວເກຣັກກໍດີ ຄົນຕ່າງດ້າວກໍດີ ຜູ້
ມີປັນຍາກໍດີ ຫລືຜູ້ບໍ່ມີປັນຍາກໍຢ່າ
1:15 ຈັ່ງຊັ້ນ ທໍ່ທີ່ມີກຳລັງໃນໂຕຂ້ອຍນີ້ ຂ້ອຍພ້ອມທີ່ຊິໄປປະກາດຂ່າວປະເສີດ
ໃຫ້ກັບພວກພີ່ນ້ອງທີ່ຢູ່ ໂຣມ ນຳ
1:16 ຄືຂ້ອຍບໍ່ມີການລະອາຍໃນຂ່າວປະເສີດຂອງ ພຣະຄຣິດ ເລີຍ ຍ້ອນຂ່າວ
ປະເສີດນີ້ປະກອບດ້ວຍອຳນາດຂອງພຣະເຈົ້າ ສາມາດເຮັດໃຫ້ຄູ່ຄົນທີ່ວາງໃຈ
ໄດ້ຮັບຄວາມລອດພົ້ນຈາກບາບ ພວກຢິວກ່ອນ ພ້ອມທັງຊົນຊາດອື່ນໆ ນຳ

1:17 ຄືວ່າ ໃນຂ່າວປະເສີດນີ້ ທາງທີ່ຊິເປັນຄົນຊອບທຳ ຖືກຕ້ອງໃນສາຍຕາຂອງ
ພຣະເຈົ້າ ເພີຍວ່າ ເລີ່ມຕົ້ນກໍດ້ວຍຄວາມເຊື່ອ ສຸດທ້າຍກໍຄວາມເຊື່ອ ຕາມທີ່ມີ
ຂຽນໄວ້ໃນ ພຣະຄໍາ ແລ້ວວ່າ “ຄົນຊອບທຳນັ້ນ ຊິດຳລົງຢູ່ໂດຍຄວາມເຊື່ອ”
1:18 ດ້ວຍວ່າ ຄວາມໂມໂຫຂອງພຣະເຈົ້າໄດ້ປາກົດຊັດຈາກສະຫວັນລົງມາຕໍ່
ຄວາມຊົ່ວຊ້າເລວຊາມ ກັບຕໍ່ຄວາມອະທຳໝົດຄູ່ແນວຂອງມະນຸດ ທີ່ເອົາຄວາມ
ຊົ່ວຂອງພວກເຂົາ ມາປິດບັງຄວາມຈິງເລື່ອງພຣະເຈົ້າໄວ້
1:19 ຍ້ອນວ່າ ການທີ່ພວກເຂົາມີໂອກາດຮູ້ຈັກກັບກັບພຣະເຈົ້າ ກໍປາກົດຊັດແຈ້ງ
ຢູ່ໃນໃຈຂອງເຂົາແລ້ວ ຍ້ອນວ່າພຣະເຈົ້າໄດ້ເປີດເຜີຍເພິ່ນເອງໃຫ້ເຂົາຮູ້ແລ້ວ
1:20 ຄືຕັ້ງແຕ່ສ້າງໂລກມາແລ້ວ ທ່ານລັກສະນະສະເພາະຂອງພຣະເຈົ້າ ຜູ້ທີ່ຕາ
ເບິ່ງບໍ່ເຫັນ ໄດ້ປາກົດຢ່າງຊັດເຈນ ຊຶ່ງສຳນຶກໄດ້ໃນສິ່ງທຳຊາດທີ່ເພິ່ນໄດ້ສ້າງນັ້ນ
ຄືການເປັນພຣະເຈົ້າຂອງເພິ່ນ ຜູ້ຊົງລິດທານຸພາບຕະຫລອດຊົ່ວອັນຕະຫລອດ-
ໄປເປັນນິດ ພວກເຂົາຈັ່ງບໍ່ມີຂໍ້ແກ້ໂຕໃດໆ ໄດ້ເລີຍ
1:21 ຍ້ອນວ່າ ແມ່ນແຕ່ພວກເຂົາຮູ້ເຖິງວ່າມີພຣະເຈົ້າແລ້ວ ເຂົາບໍ່ໄດ້ໃຫ້ກຽດເພິ່ນ
ເລີຍໃນຖານະວ່າເປັນພຣະເຈົ້າ ກັບບໍ່ໄດ້ຂອບຄຸນເພິ່ນນຳ ແຕ່ເຂົາກັບຄຶດແຕ່ໃນ
ແນວທາງທີ່ບໍ່ເປັນສາລະ  ແລ້ວໃຈໂງ່ບ້າຂອງເຂົາກໍມືດມົວໄປ
1:22 ພວກເຂົາຫາວ່າມີປັນຍາ ແຕ່ເຂົາກັບກາຍເປັນຄົນໂງ່ຊໍ້າ
1:23 ແລ້ວພວກເຂົາເລີຍແລກເອົາສະຫງ່າລາສີອັນຮຸ່ງເຮືອງຂອງພຣະເຈົ້າ ຜູ້ອຳ-
ມະຕະທີ່ດຳລົງຢູ່ເປັນນິດ ມາປັ້ນເປັນຮູບໂຕຄົນ ຜູ້ອະນິຈັງທີ່ບໍ່ຍັ່ງຍືນ ຮູບນົກ ຮູບ
ສັດສີ່ຕີນ  ກັບຮູບສັດເລືອຄານ
1:24 ຈັ່ງຊັ້ນ ພຣະເຈົ້າຈັ່ງປ່ອຍພວກເຂົາໄປ ເຂົາຈັ່ງເຮັດແນວຂີ້ດຽດເປັນຕາໜ່າຍ
ຕ່າງໆ ຕາມຕັນຫາແຫ່ງເພດໃນໃຈຂອງເຂົາ ຈັ່ງໄດ້ເຮັດແນວອັບປະຍົດອັນເປັນ-
ຕາອາຍຕໍ່ກັນແລະກັນ
1:25 ພວກເຂົາໄດ້ແລກເອົາຄວາມຈິງຂອງພຣະເຈົ້າປ່ຽນເປັນຄວາມບໍ່ຈິງ  ແລ້ວ
ຮັບໃຊ້ຂາບໄຫວ້ແນວທີ່ເພິ່ນໄດ້ສ້າງ ແທນທີ່ຊິຮັບໃຊ້ຂາບໄຫວ້ພຣະຜູ້ສ້າງ ຜູ້
ເພິ່ນສົມຄວນທີ່ຊິໄດ້ຮັບການສັນລະເສີນຕະຫລອດການເປັນນິດ

1:26 ຍ້ອນເຫດນີ້ເນາະ ພຣະເຈົ້າຈັ່ງປ່ອຍເຂົາໄປ ຮວມກັນສຸມຢູ່ແຕ່ໃນຕັນຫາ-
ແຫ່ງເພດແນວເປັນຕາໜ່າຍແທ້ ແມ່ນແຕ່ແມ່ຍິງຂອງເຂົາກໍຫັນອອກຈາກທາງ
ທຳຊາດມາສົມສູ່ຕໍ່ກັນແລະກັນໃນທາງທີ່ຜິດທຳຊາດນັ້ນ
1:27 ຝ່າຍພວກຜູ້ຊາຍກໍຄືກັນ ພວກເຂົາກໍຖິ້ມທຳຊາດ ເຊົາສົມສູ່ກັນກັບແມ່ຍິງ
ກັບມາຮວມກັນສຸມຮ້ອນຮົນດ້ວຍຕັນຫາແຫ່ງເພດ ຜູ້ຊາຍກັບຜູ້ຊາຍເຮັດແນວ
ເປັນຕາອາຍຕໍ່ກັນແລະກັນ ພວກເຂົາຈັ່ງຮັບຜົນຕອບແທນອັນສົມຄວນໃນ
ຄວາມຜິດບາບທີ່ເຂົາເຮັດ
1:28 ແລ້ວຄືກັນກັບທີ່ເຂົາບໍ່ເຫັນດີເຫັນຊອບທີ່ຊິຮູ້ຈັກພຣະເຈົ້າ ພຣະເຈົ້າຈັ່ງປ່ອຍ
ພວກເຂົາໃຫ້ເຮັດຕາມໃຈອັນຊົ່ວຊ້າເລວຊາມຂອງເຂົາ ໃນແນວທີ່ບໍ່ສົມຄວນ
1:29 ຊີວິດຂອງເຂົາເຕັມໄປດ້ວຍຄວາມອະທຳໝົດຄູ່ແນວ ຄືການຫລິ້ນຊູ້ ຄວາມ
ຊົ່ວຊ້າເລວຊາມ ຄວາມຂີ້ໂລບຢາກໄດ້ຂອງເພິ່ນ ຄວາມພະຍາບາດແກ້ແຄ້ນກັນ
ແລ້ວເຕັມໄປດ້ວຍຄວາມອິດສາບັງບຽດ ການຂ້າຟັນລັນແທງກັນ ການວິວາດ
ນັກເລງຫົວໄມ້ ການຄົດໂກງຫລອກລວງກັນ ການມຸ້ງຮ້າຍໃສ່ກັນ ການຊຸບຊິບ
ເວົ້າຂວັນກັນ
1:30 ແລ້ວການນິນທາ ການສໍ່ສຽດລັບຫລັງກັນ ການດູໝິ່ນກຽດຊັງຊັງລົບຫລູ່
ພຣະເຈົ້າ ການການຕາຍແຄ້ນເຈດຕະນາຮ້າຍຕໍ່ກັນ ການເຫຍື້ອຫຍິ່ງຈອງຫອງ
ການຄຸຍໂຕອວດອ້າງ ການຊອກແຕ່ເຮັດແນວຊົ່ວ ການບໍ່ເຊື່ອຟັງພໍ່ແມ່
1:31 ເປັນຄົນປີກຄົນໝາ ເປັນຄົນໄວ້ໃຈບໍ່ໄດ້ ມັກຜິດຄຳສັນຍາ ບໍ່ຮູ້ຮັກແພງກັນ
ຢ່າງທຳມະດາ ບໍ່ຍອມໃຫ້ອະໄພຄືນດີກັນ ບໍ່ມີຄວາມເມດຕາສົງສານຕໍ່ກັນ
1:32 ຄົນປະເພດນີ້ ແມ່ນແຕ່ເຂົາຮູ້ເຖິງເລື່ອງຄວາມຊອບທຳ ກັບການຕັດສິນລົງ-
ໂທດຂອງພຣະເຈົ້າ ວ່າຜູ້ທີ່ເຮັດແນວນັ້ນສົມຄວນທີ່ຊິຕາຍ ກໍຕາມ ແຕ່ເຂົາຍັງ
ເຮັດຢູ່ຕໍ່ໄປຄືເກົ່າ ແລ້ວກໍຍັງເຫັນດີເຫັນຊອບນຳຜູ້ອື່ນທີ່ເຮັດຄືກັນ

## ໂຣມ ບົດທີ 2

2:1 ຈັ່ງຊັ້ນ ຜູ້ຄົນທັງຫລາຍເອີຍ ພວກເຈົ້າບໍ່ມີຂໍ້ແກ້ໂຕໄດ້ເລີຍ ບໍ່ວ່າເຈົ້າຊິເປັນ
ຜູ້ໃດກໍຕາມ ຄືໃນຂະນະທີ່ເຈົ້າຜູ້ຕັດສິນປະມານຄ່າຄົນອື່ນ ເຈົ້າບໍ່ຮູ້ບໍ້ ໃນຂະນະ

ທີ່ເຈົ້າຕັດສິນເຂົາ ເຈົ້າກໍຕັດສິນໂຕເອງພ້ອມນຳ ຍ້ອນວ່າເຈົ້າຜູ້ທີ່ຕັດສິນເຂົາກໍ
ຍັງເຮັດແນວດຽວກັນກັບເຂົາ
2:2 ແຕ່ເຮົາຮູ້ຈັກກັນວ່າ ການຕັດສິນລົງໂທດຂອງພຣະເຈົ້ານັ້ນກໍຖືກຕ້ອງຕາມ
ຄວາມເປັນຈິງຕໍ່ຜູ້ຄົນທີ່ເຮັດຈັ່ງຊັ້ນ
2:3 ຜູ້ຄົນທັງຫລາຍເອີຍ ໃນຂະນະທີ່ພວກເຈົ້າຕັດສິນປະມານຄ່າຄົນອື່ນນັ້ນ ເຈົ້າ
ກໍຍັງເຮັດແນວດຽວກັນຄືເຂົາ ຈັ່ງຊັ້ນ ເຈົ້າຄຶດວ່າເຈົ້າຊິໜີຊິລອດຈາກການຕັດ-
ສິນລົງໂທດຂອງພຣະເຈົ້າໄດ້ບໍ້
2:4 ຫລືວ່າ ພວກເຈົ້າສາມາດລົບຫລູ່ດູໝິ່ນພຣະກະລຸນາທິຄຸນອັນເຫລືອລົ້ນ ພ້ອມ
ທັງຄວາມອົດທົນອົດກັ້ນອັນດົນນານຂອງພຣະເຈົ້ານັ້ນໂດຍສູນເປົ່າໄດ້ບໍ້ ຄືພວກ
ເຈົ້າບໍ່ຮູ້ກັນບໍ້ ວ່າ ພຣະກະລຸນາທິຄຸນຂອງພຣະເຈົ້ານັ້ນ ມຸ້ງທີ່ຊິນຳພວກເຈົ້າໄປສູ່
ການກັບໃຈໃໝ່
2:5 ແຕ່ກັບເປັນວ່າ ໃຈແຂງກະດ້າງ ກັບການບໍ່ຍອມກັບໃຈຂອງພວກເຈົ້ານັ້ນ
ພວມຊິສະສົມຄວາມໂມໂຫຂອງພຣະເຈົ້າໄວ້ສຳລັບມື້ທີ່ພຣະເຈົ້າຊິຕັດສິນລົງ-
ໂທດ ໂດຍຄວາມເປັນທຳຂອງເພິ່ນໃນພາຍໜ້ານັ້ນ
2:6 ແລ້ວເພິ່ນຊິຕອບແທນຄູ່ຄົນຕາມທີ່ເຂົາໄດ້ເຮັດນັ້ນ
2:7 ຄືຊິມອບຊີວິດອຳມະຕະອັນຕະຫລອດໄປເປັນນິດ ຊຶ່ງປະກອບດ້ວຍສະຫງ່າ-
ລາສີກັບກຽດ ໃຫ້ຜູ້ທີ່ປາດຖະໜາທີ່ຊິເຮັດແນວຖືກແນວດີ ໂດຍອາໄສຄວາມອົດ
ທົນພາກພຽນ
2:8 ແຕ່ສ່ວນຜູ້ຄົນທີ່ເຫັນແກ່ໂຕ ບໍ່ຍອມເຊື່ອຟັງຄວາມຈິງ ແຕ່ກັບເຮັດໃນທາງຊົ່ວ
ແນວບໍ່ເປັນທຳ ກໍຊິຖືກຄວາມໂມໂຫຢ່າງຮ້າຍແຮງຂອງເພິ່ນ
2:9 ຄືຊິມີແຕ່ຄວາມທຸກທໍລະມານອັນເສົ້າໂສກປວດຮ້າວເຂົ້າສູ່ຫົວໃຈຂອງຄູ່ຄົນທີ່
ເຮັດຊົ່ວ ແມ່ນພວກຄົນ ຢິວ ກ່ອນ ກັບພວກຄົນຕ່າງຊາດນຳ
2:10 ແຕ່ສ່ວນຜູ້ທີ່ເຮັດແນວຖືກແນວດີນັ້ນ ພຣະເຈົ້າກໍຊິມອບສັກສີ ກັບກຽດ ພ້ອມ
ກັບສັນຕິພາບໃຫ້ກັບພວກເຂົາຄູ່ຄົນ ແມ່ນພວກຄົນ ຢິວ ກ່ອນ ກັບພວກຄົນຕ່າງ-
ຊາດນຳ
2:11 ຄືວ່າພຣະເຈົ້າບໍ່ໄດ້ລຳອຽງເຫັນແກ່ໜ້າຜູ້ໃດເລີຍ

2:12 ຄືຜູ້ໃດກໍຕາມ ທີ່ເຮັດບາບໂດຍບໍ່ມີກົດບັນຍັດຂອງພຣະເຈົ້າເປັນທີ່ອ້າງອີງ
ເຂົາກໍຊິພິນາດໂດຍນອກກົດບັນຍັດນັ້ນ ແລ້ວຜູ້ໃດທີ່ເຮັດບາບໂດຍຢູ່ໃນຂອບ-
ເຂດຂອງກົດບັນຍັດ ເຂົາກໍຊິຖືກການພິພາກສາຕາມຂໍ້ອ້າງອີງໃນກົດບັນຍັດນັ້ນ
ໝົດຄູ່ຄົນ
2:13 (ຄືບໍ່ແມ່ນຄົນທີ່ຮັບຟັງກົດບັນຍັດເປັນຜູ້ຊອບທຳຖືກຕ້ອງໃນສາຍຕາຂອງ
ພຣະເຈົ້າດອກ ແຕ່ແມ່ນຜູ້ທີ່ເຮັດຕາມກົດບັນຍັດນັ້ນຕ່າງຫາກເປັນຜູ້ຊອບທຳ
2:14 ຄືບັດຄົນຕ່າງຊາດ ໄດ້ເຮັດຕາມກົດບັນຍັດນັ້ນໂດຍທຳຊາດຂອງເຂົາ ກໍສະ-
ແດງວ່າ ແມ່ນແຕ່ພວກເຂົາບໍ່ໄດ້ມີກົດບັນຍັດຂອງພຣະເຈົ້ານັ້ນ ເຂົາກໍຍັງມີກົດ-
ບັນຍັດບ່ອງບອກໄວ້ໃນໂຕເຂົາເອງ
2:15 ຊຶ່ງການເຮັດຂອງເຂົາເຜີຍອອກໃຫ້ເຫັນກັນວ່າ ເຂົາມີກົດບັນຍັດຈາລຶກໄວ້ຢູ່-
ໃນຫົວໃຈຂອງເຂົາຢູ່ແລ້ວ ຄືໃຈສຳນຶກຜິດຊອບຊົ່ວດີໃນໃຈຂອງເຂົາກໍເປັນພະ-
ຍານ ຄວາມນຶກຄຶດຂອງເຂົາຈັ່ງຊິຢືນຢັນວ່າແມ່ນ ຫລືຟ້ອງໃສ່ວ່າບໍ່ແມ່ນ)
2:16 ຊຶ່ງໃນມື້ທີ່ຊິມານັ້ນ ພຣະເຈົ້າຊິຕັດສິນແນວເລິກລັບຂອງມະນຸດໂດຍ ພຣະ-
ເຢຊູຄຣິດ ຕາມຂ່າວປະເສີດຂອງຂ້ອຍປະກາດນັ້ນ
2:17 ນີ້ແຫລະ ພວກເຈົ້າທີ່ເອີ້ນກັນວ່າເປັນຄົນ ຢິວ ກັບໄດ້ຫາກໍອາໄສໃນກົດບັນ-
ຍັດ ແລ້ວອວດອ້າງໂຕເຖິງພຣະເຈົ້າ
2:18 ແລ້ວຮູ້ເຖິງຈຸດປະສົງຂອງເພິ່ນ ກັບໄດ້ເຫັນດີເຫັນຊອບໃນແນວຕ່າງໆ ທີ່
ປະເສີດກວ່າ ຍ້ອນວ່າພວກເຈົ້າໄດ້ຮຽນຮູ້ຈາກຂໍ້ກົດບັນຍັດແລ້ວນັ້ນ
2:19 ແລ້ວກໍຍັງໝັ້ນໃຈໃນໂຕເອງວ່າເປັນຜູ້ຈູງຄົນຕາບອດ ເປັນຄວາມສະຫວ່າງ
ສ່ອງທາງໃຫ້ຜູ້ຄົນທັງຫລາຍທີ່ຢູ່ໃນຄວາມມືດ
2:20 ແລ້ວກໍເປັນຜູ້ຝຶກສອນຄົນໂງ່ຜູ້ຂາດຄວາມຮູ້ ເປັນຄູສອນພວກເດັກໆ ຍ້ອນ
ພວກເຈົ້າມີກົດບັນຍັດຂອງພຣະເຈົ້າ ຊຶ່ງເປັນອົງປະກອບພື້ນຖານຂອງຄວາມຮູ້
ກັບຄວາມຈິງຄູ່ຢ່າງ
2:21 ຈັ່ງຊັ້ນ ພວກເຈົ້າຜູ້ສອນຄົນອື່ນໄດ້ ເປັນຫຍັງຄືບໍ່ສອນໂຕເຈົ້າເອງນຳ ພວກ
ເຈົ້າທີ່ສອນວ່າບໍ່ຄວນລັກຊັບຂອງເພິ່ນ ໂຕເຈົ້າເອງກໍຍັງລັກຢູ່ບໍ້

2:22 ເຈົ້າຜູ້ທີ່ສອນວ່າ "ບໍ່ຄວນຊິລ່ວງປະເວນີ" ໂຕເຈົ້າເອງກໍຍັງລ່ວງປະເວນີຢູ່ບໍ້
ເຈົ້າຜູ້ກຽດຊັງຊັງຮູບເຄົາລົບ ໂຕເຈົ້າເອງກໍຍັງປຸ້ນວິຫານພວກເຂົາຢູ່ບໍ້
2:23 ເຈົ້າຜູ້ອວດອ້າງວ່າໂຕເອງພູມໃຈໃນກົດບັນຍັດຂອງພຣະເຈົ້າ ໂຕເຈົ້າເອງກໍ
ຍັງລົບຫລູ່ພຣະນາມພຣະເຈົ້າດ້ວຍການລະເມີດກົດບັນຍັດຂອງເພິ່ນຢູ່ບໍ້
2:24 ຕາມທີ່ມີຂຽນໄວ້ໃນ ພຣະຄຳ ວ່າ "ພຣະນາມອັນສັກສິດຂອງພຣະເຈົ້າຖືກ
ລົບຫລູ່ດູໝິ່ນຢູ່ນຳຄົນຕ່າງຊາດຍ້ອນພວກເຈົ້າເອງ"
2:25 ເຊັ່ນວ່າ ຄັ່ນເຈົ້າຮັກສາກົດບັນຍັດ ການເຂົ້າພິທີຕັດກໍເປັນປະໂຫຍດຢູ່ ແຕ່
ຄັ່ນເຈົ້າລ່ວງລະເມີດກົດບັນຍັດ ການທີ່ພວກເຈົ້າເຂົ້າພິທີຕັດນັ້ນກໍບໍ່ມີຄວາມໝ
າຍອີຫຍັງເລີຍ ຄືກັນກັບບໍ່ໄດ້ເຮັດຊໍ້າ
2:26 ຈັ່ງຊັ້ນ ຄັ່ນຊົນຊາດໃດທີ່ບໍ່ເປັນຄົນ ຢິວ ຊຶ່ງຢູ່ນອກການເຂົ້າພິທີຕັດ ແຕ່ກໍຍັງ
ຮັກສາກົດບັນຍັດອັນຊອບທຳໄວ້ຢູ່ ການບໍ່ໄດ້ເຂົ້າພິທີຕັດຂອງເຂົານັ້ນ ຊິມີຄ່າທໍ່-
ທຽມກັບວ່າເຂົາໄດ້ເຂົ້າພິທີຕັດແລ້ວ ບໍ່ແມ່ນບໍ້
2:27 ແລ້ວຄົນຕ່າງຊາດນັ້ນ ທັງໆ ທີ່ວ່າເຂົາບໍ່ໄດ້ເຂົ້າພິທີຕັດ ຄືຍັງປົກກະຕິຢູ່ ແຕ່ກໍ
ຍັງໄດ້ເຮັດຖືກຕ້ອງຕາມກົດບັນຍັດນັ້ນ ການເຮັດຖືກຕ້ອງຂອງເຂົາກໍຊິຟ້ອງໃສ່
ພວກເຈົ້າ ບໍ່ແມ່ນບໍ້ ຄືວ່າ ແມ່ນແຕ່ເຈົ້າມີກົດບັນຍັດທັງບົດທັງຂໍ້ ແລ້ວມີລະບົບ
ການເຂົ້າພິທີຕັດນຳ ແຕ່ເຈົ້າຍັງລ່ວງລະເມີດຕໍ່ກົດບັນຍັດນັ້ນ
2:28 ຄືການເປັນຄົນ ຢິວ ບໍ່ແມ່ນແຕ່ເລື່ອງພາຍນອກ ກັບການເຂົ້າພິທີຕັດກໍບໍ່ແມ່ນ
ການເຂົ້າພິທີຕັດພາຍນອກຕາມເນື້ອໜັງ
2:29 ດ້ວຍວ່າ ຜູ້ທີ່ເປັນຄົນ ຢິວ ແທ້ກໍເປັນຄົນ ຢິວ ພາຍໃນ ກັບການເຂົ້າພິທີຕັດ
ແທ້ກໍເປັນການເຂົ້າພິທີຕັດຢູ່ທີ່ໃຈ ຝ່າຍຈິດວິນຍານ ບໍ່ແມ່ນຕາມໂຕອັກສອນໃນ
ບົດບັນຍັດ ຊຶ່ງການຍົກຍ້ອງສັນລະເສີນທີ່ເຂົາໄດ້ຮັບນັ້ນ ບໍ່ໄດ້ມາຈາກມະນຸດ
ແຕ່ມາຈາກພຣະເຈົ້າ

## ໂຣມ ບົດທີ 3

3:1 ຄັ່ນບໍ່ຊັ້ນ ການເປັນຄົນ ຢິວ ຊິໄດ້ປຽບອີຫຍັງ ແລ້ວການເຂົ້າພິທີຕັດນັ້ນກໍຊິໄດ້
ກຳໄລອີຫຍັງ

3:2 ຂໍຕອບວ່າ ເປັນປະໂຫຍດໃນໝົດຄູ່ຢ່າງ ປະການສຳຄັນອັນແຮກ ພວກຄົນ
ຢິວ ກໍເປັນຜູ້ຮັບມອບການເບິ່ງແຍງຮັກສາ ພຣະຄຳ ຂອງພຣະເຈົ້າ
3:3 ແລ້ວວ່າ ຄັນຜູ້ລາງຄົນບໍ່ເຊື່ອ ຄວາມບໍ່ເຊື່ອຂອງເຂົານັ້ນຊິສາມາດເຮັດໃຫ້
ຄວາມຄວາມຈິ່ງຮັກພັກດີຂອງພຣະເຈົ້າສູນຫາຍໄປໄດ້ບໍ້
3:4 ເປັນໄປບໍ່ໄດ້ເລີຍ ເອີ້ ແມ່ນແຕ່ຄູ່ຄົນບໍ່ສັດຈິງກໍຂໍພຣະເຈົ້າເປັນຜູ້ຈິ່ງຮັກພັກດີ
ເຖີດ ຕາມທີ່ມີຂຽນໄວ້ໃນ ພຣະຄຳ ວ່າ “ເພື່ອປາກົດແຈ້ງວ່າ ທ່ານເປັນຜູ້ສັດຊື່
ທ່ຽງທຳໃນຄວາມເວົ້າໝົດຄູ່ຢ່າງ ກັບມີໄຊບັດຍາມຖືກເຂົາສອບສວນທ່ານ”
3:5 ແຕ່ຄັ່ນຄວາມບາບອັນບໍ່ເປັນທຳຂອງຄົນເຮົານີ້ ສາມາດຊ່ອຍໃຫ້ຄວາມຊອບ-
ທຳຂອງພຣະເຈົ້າປາກົດຊັດເຈນຂຶ້ນ ເຮົາຊິວ່າຈັ່ງໃດດີ ການທີ່ພຣະເຈົ້າຊິລົງ-
ໂທດໂດຍຄວາມໂມໂຫຍ້ອນບາບຂອງຄົນເຮົານັ້ນ ໄດ້ເຮັດໃຫ້ເພິ່ນກັບກາຍເປັນ
ຜູ້ບໍ່ຍຸດຕິທຳໄດ້ບໍ້ (ຂ້ອຍພວມເວົ້າຢ່າງທຳມະດາມະນຸດຊື່ໆ ນີ້)
3:6 ເປັນໄປບໍ່ໄດ້ເລີຍ ຄັນບໍ່ຊັ້ນແລ້ວ ພຣະເຈົ້າຊິພິພາກສາໂລກໂດຍຍຸດຕິທຳໄດ້
ຈັ່ງໃດ
3:7 ຄື ຄັ່ນຄວາມບໍ່ສັດຊື່ຂອງຂ້ອຍເປັນເຫດໃຫ້ຄວາມສັດຈິງຂອງພຣະເຈົ້າປາກົດ
ຫລາຍຂຶ້ນ ເຖິງການຖວາຍກຽດເພິ່ນ ເປັນຫຍັງໂຕຂ້ອຍຊິຕ້ອງຖືກພິພາກສາວ່າ
ເປັນຄົນບາບ
3:8 ແລ້ວເປັນຫຍັງ ພວກເຮົາບໍ່ເຮັດຄວາມຊົ່ວເພື່ອຄວາມດີຊິໄດ້ເກີດຂຶ້ນ (ຕາມທີ່ຜູ້
ລາງຄົນເວົ້າໃສ່ ຫາວ່າພວກເຮົາໄດ້ເວົ້າ) ການທີ່ພຣະເຈົ້າຊິລົງໂທດຄົນພວກນັ້ນ
ກໍຍຸດຕິທຳແລ້ວ
3:9 ຄັ່ນບໍ່ຊັ້ນ ຄົນ ຢິວ ເຮົາຊິດີກວ່າຄົນຕ່າງຊາດນັ້ນຢູ່ບໍ້ ຂໍຕອບວ່າບໍ່ແລ້ວ ຄືຕາມ
ພວກເຮົາເຄີຍບອກມາແຕ່ກ່ອນວ່າ ຄົນ ຢິວ ກັບຄົນຕ່າງຊາດທັງສອງຝ່າຍຕ່າງຢູ່
ໃຕ້ອຳນາດຂອງບາບໝົດຄູ່ຄົນຢູ່ແລ້ວ
3:10 ຕາມທີ່ມີຂຽນໄວ້ໃນ ພຣະຄຳ ວ່າ “ບໍ່ມີໃຜຈັກຄົນເປັນຄົນຊອບທຳ ບໍ່ມີເລີຍ
3:11 ບໍ່ມີໃຜເຂົ້າໃຈ ບໍ່ມີໃຜຊອກຫາພຣະເຈົ້າເລີຍ
3:12 ເຂົາໝົດຄູ່ຄົນໄດ້ຫລົງທາງໄປແລ້ວ ເຂົາທັງໝົດບໍ່ມີຜົນປະໂຫຍດ ບໍ່ມີໃຜທີ່
ເຮັດດີຈັກຄົນເລີຍ

3:13 ປາກຂອງເຂົາຄືຫລຸມຝັງສົບທີ່ຖືກເປີດໄວ້ ເຂົາໃຊ້ລີ້ນໂຕເອງໃນທາງລໍ້ລວງ
ກັບມີພິດງູຮ້າຍຊ້ອນໄວ້ຢູ່ໃຕ້ສົບປາກຂອງເຂົາ
3:14 ຄືປາກຂອງເຂົາເຕັມໄປດ້ວຍຄຳສາບແຊ່ງກັບຄຳຂົມຂື່ນ
3:15 ຕີນຂອງເຂົາໄວໃນການເຮັດໃຫ້ເລືອດຕົກ
3:16 ຫົນທາງຂອງເຂົາເຕັມໄປດ້ວຍຄວາມພິນາດກັບຄວາມທຸກ
3:17 ແລ້ວພວກເຂົາກໍບໍ່ຮູ້ຈັກຫົນທາງເຂົ້າສູ່ສັນຕິພາບເລີຍ
3:18 ເຂົາບໍ່ມີຄວາມຢ້ານຕໍ່ພຣະເຈົ້າໃນສາຍຕາຂອງເຂົາເລີຍ"
3:19 ບັດນີ້ ພວກເຮົາຮູ້ຢູ່ແລ້ວວ່າ ກົດບັນຍັດໝົດທູ່ຂໍ້ທີ່ກ່າວໄວ້ນັ້ນ ໄດ້ກ່າວໃຫ້ຄົນ
ພວກນັ້ນທີ່ຢູ່ພາຍໃຕ້ກົດບັນຍັດ ເພື່ອປິດປາກໝົດທູ່ຄົນ ຈັ່ງໃຫ້ມະນຸດທັງໂລກ
ສຳນຶກຄວາມຜິດຕໍ່ໜ້າພຣະເຈົ້າ
3:20 ຈັ່ງຊັ້ນ ບໍ່ມີໃຜຈັກຄົນສາມາດເປັນຜູ້ຊອບທຳ ຖືກຕ້ອງໃນສາຍຕາຂອງພຣະ-
ເຈົ້າໄດ້ ໂດຍການປະຕິບັດຕາມກົດບັນຍັດນັ້ນໄດ້ ຍ້ອນວ່າ ຄົນເຮົາສາມາດຮູ້ຈັກ
ບາບໄດ້ໂດຍທາງກົດບັນຍັດນັ້ນເອງ
3:21 ແຕ່ບັດນີ້ ທາງທີ່ຊິເປັນຜູ້ຊອບທຳຂອງພຣະເຈົ້າໄດ້ນັ້ນ ນອກເໜືອການອາໄສ
ກົດບັນຍັດໄດ້ປາກົດແລ້ວ ຊຶ່ງບົດບັນຍັດຂອງ ໂມເຊ ກັບພວກຜູ້ເປັນປາກເປັນ-
ສຽງໄດ້ເປັນພະຍານອ້າງອີງເຖິງ
3:22 ຄືແມ່ນທາງຊອບທຳຂອງພຣະເຈົ້າ ໂດຍການເຊື່ອວາງໃຈໃນ ພຣະເຢຊູຄຣິດ
ນັ້ນເອງ ຊຶ່ງມີໄວ້ສຳລັບໝົດທູ່ຄົນທີ່ເຊື່ອ ຍ້ອນວ່າຜູ້ຄົນທັງຫລາຍບໍ່ມີຄວາມ
ແຕກຕ່າງກັນເລີຍ
3:23 ດ້ວຍວ່າທູ່ຄົນໄດ້ເຮັດບາບ ຈັ່ງໄດ້ເສື່ອມຈາກສະຫງ່າລາສີຂອງພຣະເຈົ້າ
3:24 ແຕ່ວ່າ ພຣະເຈົ້າ ໂດຍທາງພຣະກະລຸນາທິຄຸນຂອງເພິ່ນ ໄດ້ໂປດໃຫ້ເປັນຜູ້
ຊອບທຳໄດ້ໂດຍທີ່ບໍ່ໄດ້ຄິດມູນຄ່າອີຫຍັງ ໂດຍທາງ ພຣະເຢຊູຄຣິດ ຜູ້ເພິ່ນໄດ້
ໄຖ່ຄົນເຮົາໃຫ້ລອດພົ້ນ
3:25 ຊຶ່ງພຣະເຈົ້າໄດ້ປະກາດວ່າພຣະໂລຫິດຂອງພຣະເຢຊູຄຣິດນັ້ນ ເປັນເຄື່ອງບູ-
ຊາບິນບານ ລົບລ້າງຂໍ້ຄະດີຂອງຄົນເຮົາຈັ່ງໄດ້ລະງັບຄວາມໂມໂຫຂອງເພິ່ນໄດ້
ໂດຍທາງຄວາມເຊື່ອ ຊຶ່ງສຳແດງເຖິງຄວາມເປັນທຳຂອງພຣະເຈົ້າ ທີ່ເພິ່ນມີການ

ພາກພຽນອົດກັ້ນໄວ້ ຈົນກວ່າຊິໃຫ້ອະໄພໂທດຄົນເຮົາ ໂດຍວ່າເພິ່ນເຄີຍມອງ
ຂ້າມບາບທີ່ຄົນເຮົາເຮັດມາແລ້ວນັ້ນ
3:26 ຊຶ່ງໃນບັດນີ້ ໄດ້ປະກາດໃຫ້ເຫັນຄວາມເປັນທຳຂອງພຣະເຈົ້າ ທີ່ເພິ່ນໄດ້ສຳ-
ແດງຄວາມຍຸດຕິທຳຂອງເພິ່ນ ໃນການໂຜດໃຫ້ຜູ້ທີ່ເຊື່ອວາງໃຈໃນ ພຣະເຢຊູ ນັ້ນ
ກໍໄດ້ເປັນຜູ້ຊອບທຳຂອງເພິ່ນ
3:27 ບັດເປັນຈັ່ງຊັ້ນແລ້ວ ເຮົາຊິເອົາອີຫຍັງມາອວດໂຕ ກໍປິດທາງໄປແລ້ວ ໂດຍ
ຫລັກການອີຫຍັງ ເປັນຫລັກການປະພຶດຕາມກົດບັນຍັດໄດ້ບໍ້ ບໍ່ມີທາງເລີຍ ແຕ່
ເປັນຫລັກການເລື່ອງຄວາມເຊື່ອເທົ່ານັ້ນ
3:28 ຈັ່ງຊັ້ນ ພວກເຮົາສະຫລຸບໄດ້ວ່າ ຄົນໜຶ່ງຄົນໃດຊິເປັນຄົນຊອບທຳໄດ້ ໂດຍ
ອາໄສຄວາມເຊື່ອເທົ່ານັ້ນ ບໍ່ແມ່ນອາໄສການປະພຶດຕາມກົດບັນຍັດ
3:29 ຫລືວ່າ ພຣະເຈົ້າເປັນພຣະເຈົ້າຂອງພວກຄົນ ຢິວ ພວກດຽວເທົ່ານັ້ນບໍ້ ບໍ່
ແມ່ນເພິ່ນເປັນພຣະເຈົ້າຂອງຄົນຕ່າງຊາດພ້ອມກັນບໍ້ ເອີ້ ເພິ່ນເປັນພຣະເຈົ້າ
ຂອງ ຊົນຕ່າງຊາດ ຄືກັນ
3:30 ດ້ວຍເຫັນວ່າ ແມ່ນພຣະເຈົ້າ ຜູ້ທ່ຽງແທ້ແຕ່ຜູ້ດຽວນັ້ນ ຊິກະລຸນາທັງຄົນ ຢິວ ຜູ້
ທີ່ເຂົ້າພິທີຕັດ ກັບຄົນຕ່າງຊາດຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ໃຫ້ເປັນຄົນຊອບທຳໃນ
ສາຍຕາຂອງພຣະເຈົ້າໄດ້ ໂດຍທາງຄວາມເຊື່ອວາງໃຈຄືກັນ
3:31 ຈັ່ງຊັ້ນ ເຮົາຈັ່ງເຮັດໃຫ້ກົດບັນຍັດໝົດປະໂຫຍດດ້ວຍຄວາມເຊື່ອໄດ້ບໍ້ ເປັນ
ໄປບໍ່ໄດ້ເລີຍ ເອີ້ ເຮົາເຮັດໃຫ້ກົດບັນຍັດດຳລົງໝັ້ນຄົງຂຶ້ນ

## ໂຣມ ບົດທີ 4

4:1 ຈັ່ງຊັ້ນ ຊິວ່າຈັ່ງໃດດີ ຄືເຖົ້າ ອັບຣາຮາມ ຜູ້ເປັນພໍ່ຕະກູນຂອງຊາດ ຢິວ ເຮົາ
ນັ້ນ ລາວ ໄດ້ອີຫຍັງແໜ່
4:2 ຄືຄັ່ນເຖົ້າ ອັບຣາຮາມ ເປັນຜູ້ຊອບທຳໂດຍການປະຕິບັດຂອງຜູ້ເອງ ລາວກໍຊິມີ
ແນວອວດຕໍ່ໜ້າຄົນໄດ້ ແຕ່ວ່າ ບໍ່ມີທາງອວດຕໍ່ໜ້າພຣະເຈົ້າດອກ
4:3 ພຣະຄຳ ວ່າຈັ່ງໃດ ໄດ້ວ່າ “ເຖົ້າ ອັບຣາຮາມ ໄດ້ເຊື່ອວາງໃຈໃນພຣະເຈົ້າ
ແລ້ວພຣະເຈົ້ານັບວ່າເປັນຄວາມຊອບທຳ”

4:4 ບັດນີ້ ສ່ວນຜູ້ທີ່ປະຕິບັດວຽກງານ ຄ່າຈ້າງທີ່ຊິໃຫ້ນັ້ນ ບໍ່ໄດ້ຖືວ່າເປັນບຸນຄຸນ
ແຕ່ຖືວ່າເປັນການຊຳລະໜີ້
4:5 ແຕ່ສ່ວນຜູ້ທີ່ບໍ່ໄດ້ອາໄສການປະຕິບັດ ແຕ່ໄດ້ອາໄສຄວາມເຊື່ອວາງໃຈໃນ
ພຣະເຈົ້າ ຜູ້ເພິ່ນທີ່ໂຜດໃຫ້ຄົນບາບເປັນຄົນຊອບທຳ ຄວາມເຊື່ອວາງໃຈຂອງ
ຄົນນັ້ນ ພຣະເຈົ້ານັບວ່າເປັນຄວາມຊອບທຳ
4:6 ຄືກັນກັບທີ່ກະສັດ ດາວິດ ໄດ້ເວົ້າເຖິງຄວາມເປັນສຸກຂອງຄົນທີ່ພຣະເຈົ້າໄດ້
ກະລຸນາໃຫ້ເປັນຄົນຊອບທຳ ໂດຍນອກການປະຕິບັດ
4:7 ເພິ່ນໄດ້ວ່າ “ຜູ້ຄົນທີ່ພຣະເຈົ້າໂຜດໃຫ້ອະໄພໂທດຄວາມຊົ່ວ ກັບຜູ້ຄົນທີ່ເພິ່ນ
ໄດ້ປິດບັງບາບຂອງເຂົາ ກໍໄດ້ພົບເປັນສຸກ
4:8 ຄືຜູ້ທີ່ພຣະເຈົ້າບໍ່ໄດ້ຖືໂທດຍ້ອນບາບ ກໍໄດ້ພົບເປັນສຸກ”
4:9 ຄັ່ນຈັ່ງຊັ້ນ ຄວາມໄດ້ພົບເປັນສຸກນີ້ ພຣະເຈົ້າມີໄວ້ສະເພາະພວກຄົນ ຢິວ ຜູ້ທີ່
ເຂົ້າພິທີຕັດແຕ່ພວກດຽວບໍ້ ຫລືວ່າເພິ່ນໃຫ້ພວກຄົນຕ່າງຊາດທີ່ບໍ່ໄດ້ເຂົ້າພິທີຕັດ
ໄດ້ພົບເປັນສຸກນຳ ຍ້ອນເຮົາວ່າ “ພຣະເຈົ້າໃຫ້ເຖົ້າ ອັບຣາຮາມ ເປັນຄົນຊອບທຳ
ຍ້ອນຄວາມເຊື່ອ”
4:10 ແຕ່ພຣະເຈົ້າໄດ້ນັບວ່າ ເຖົ້າ ອັບຣາຮາມ ເປັນຄົນຊອບທຳໃນຕອນໃດ ຕອນ
ທີ່ ລາວ ໄດ້ຮັບເຂົ້າພິທີຕັດແລ້ວບໍ້ ຫລືກ່ອນທີ່ ລາວ ຍັງບໍ່ທັນເຂົ້າພິທີຕັດ ແທ້ຈິງ
ແລ້ວເພິ່ນນັບວ່າ ລາວ ເປັນຄົນຊອບທຳຕອນ ລາວ ຍັງບໍ່ທັນເຂົ້າພິທີຕັດ ບໍ່ແມ່ນ
ເຂົ້າພິທີຕັດແລ້ວ
4:11 ແລ້ວ ລາວ ໄດ້ເຂົ້າພິທີຕັດ ເປັນສັນຍະລັກໃນການເປັນຜູ້ຊອບທຳດ້ວຍ
ຄວາມເຊື່ອ ຄື ລາວ ໄດ້ຮັບເຊື່ອມາກ່ອນ ຕອນທີ່ ລາວ ຍັງບໍ່ທັນເຂົ້າພິທີຕັດ ເພື່ອ
ລາວ ຊິໄດ້ເປັນພໍ່ຂອງຄົນທັງປວງທີ່ເຊື່ອ ບໍ່ວ່າຊິເປັນຜູ້ເຂົ້າພິທີຕັດ ຫລືບໍ່ໄດ້ເຂົ້າ
ພິທີຕັດກໍຢ່າ ເພື່ອທັງສອງຝ່າຍຊິໄດ້ເປັນຜູ້ຊອບທຳໃນສາຍຕາຂອງພຣະເຈົ້າໄດ້
4:12 ແລ້ວເຖົ້າ ອັບຣາຮາມ ໄດ້ເປັນພໍ່ຂອງຄົນ ຢິວ ຜູ້ທີ່ເຂົ້າພິທີຕັດ ພຽງແຕ່ພວກ
ດຽວ ແຕ່ເປັນພໍ່ຂອງຜູ້ຄົນທີ່ດຳເນີນໃນທາງຄວາມເຊື່ອ ຊຶ່ງເຖົ້າ ອັບຣາຮາມ ໄດ້
ດຳເນີນໃນທາງນັ້ນ ກ່ອນ ລາວ ຍັງບໍ່ທັນເຂົ້າພິທີຕັດ

4:13 ໂດຍວ່າ ຄຳໝັ້ນສັນຍາທີ່ພຣະເຈົ້າໃຫ້ໄວ້ກັບເຖົ້າ ອັບຣາຮາມ ນັ້ນ ທີ່ວ່າ ລາວ
ຊິໄດ້ທັງໂລກເປັນມໍລະດົກ ເພິ່ນກໍບໍ່ໄດ້ໃຫ້ ລາວ ຫລືຜູ້ສືບເຊື້ອສາຍຂອງ ລາວ
ໂດຍທາງປະຕິບັດຕາມກົດບັນຍັດດອກ ແຕ່ໂດຍເປັນຜູ້ຊອບທຳທາງຄວາມເຊື່ອ
4:14 ຍ້ອນວ່າຄັນຜູ້ຄົນທີ່ປະຕິບັດຕາມກົດບັນຍັດຊິໄດ້ເປັນກຳມະສິດໃນມໍລະດົກ
ນັ້ນ ຄວາມເຊື່ອແບບນັ້ນກໍບໍ່ມີປະໂຫຍດອີຫຍັງເລີຍ ແລ້ວຄຳໝັ້ນສັນຍານັ້ນກໍຊິ
ໝົດສິດໄປຊື່ໆ
4:15 ດ້ວຍວ່າ ການລະເມີດຕໍ່ກົດບັນຍັດນັ້ນເປັນເຫດໃຫ້ພຣະເຈົ້າເກີດການໂມໂຫ
ແລ້ວໜ້ອງໃດທີ່ບໍ່ມີກົດບັນຍັດ ໜ້ອງນັ້ນກໍບໍ່ມີການລ່ວງລະເມີດ
4:16 ຈັ່ງຊັ້ນ ການຮັບມໍລະດົກນັ້ນຈັ່ງຂຶ້ນຢູ່ກັບຄວາມເຊື່ອຍ້ອນພຣະຄຸນ ເພື່ອຄຳ-
ໝັ້ນສັນຍານັ້ນຊິໃຫ້ໄວ້ກັບເຊື້ອສາຍຂອງ ລາວ ໝົດຄູ່ຄົນ ບໍ່ວ່າແຕ່ຜູ້ຄົນທີ່ຢູ່ທາງ
ກົດບັນຍັດແຕ່ພວກດຽວ ແຕ່ໃຫ້ຜູ້ຄົນທີ່ຢູ່ທາງຄວາມເຊື່ອແບບຢ່າງຂອງເຖົ້າ
ອັບຣາຮາມ ຄືກັນ ຜູ້ເປັນພໍ່ຂອງພວກເຮົາທັງສອງຝ່າຍ
4:17 (ຕາມທີ່ມີຂຽນໄວ້ວ່າ “ເຮົາໃຫ້ເຈົ້າເປັນພໍ່ຂອງຫລາຍຊົນຊາດ”) ນີ້ກໍຕໍ່ໜ້າ
ພຣະເຈົ້າ ຜູ້ເພິ່ນທີ່ ລາວ ໄດ້ເຊື່ອ ຄືພຣະເຈົ້າຜູ້ສາມາດຊິໃຫ້ຄົນທີ່ຕາຍແລ້ວເປັນ
ຂຶ້ນມາອີກ ກັບວ່າໄດ້ບັນດານແນວທີ່ຍັງບໍ່ທັນມີ ໃຫ້ມີຂຶ້ນມາໄດ້
4:18 ຊຶ່ງວ່າ ສ່ວນເຖົ້າ ອັບຣາຮາມ ນັ້ນ ລາວກໍມີຄວາມຫວັງອັນໝັ້ນຄົງ ແລ້ວໃນ
ຍາມທີ່ບໍ່ມີຫວັງລາວກໍຍັງເຊື່ອວາງໃຈ ວ່າຊິໄດ້ເປັນພໍ່ຂອງຫລາຍຊົນຊາດ ຕາມ
ຄຳທີ່ພຣະເຈົ້າບອກໄວ້ແລ້ວວ່າ “ເຊື້ອສາຍຂອງເຈົ້າຊິເປັນແນວນັ້ນ”
4:19 ແລ້ວຄວາມເຊື່ອຂອງ ລາວ ນັ້ນ ບໍ່ໄດ້ອ່ອນລົງ ລາວ ຈັ່ງພິຈາລະນາເບິ່ງໂຕ
ຂອງ ລາວ ເອງວ່າເຖົ້າຫລາຍຍ້ອນອາຍຸ ລາວ ຊິຮອດຮ້ອຍປີແລ້ວ ກັບວ່າມົດລູກ
ຂອງນາງ ຊາຣາ ເມຍຂອງລາວກໍເປັນໝັນນຳ
4:20 ແລ້ວ ລາວ ບໍ່ໄດ້ທໍ້ຖອຍ ສົງໄສໃນຄຳໝັ້ນສັນຍາຂອງພຣະເຈົ້າເລີຍ ແຕ່ໄດ້
ເກີດມີຄວາມເຊື່ອໝັ້ນຄົງຫລາຍຂຶ້ນ ຈັ່ງໄດ້ຖວາຍກຽດແດ່ພຣະເຈົ້າ
4:21 ແລ້ວລາວກໍເຊື່ອຢ່າງໝັ້ນໃຈວ່າ ພຣະເຈົ້າຜູ້ເພິ່ນໃຫ້ຄຳໝັ້ນສັນຍາໄວ້ນັ້ນ
ສາມາດເຮັດໃຫ້ສຳເລັດໄດ້

4:22 ຈັ່ງຊັ້ນ ພຣະເຈົ້າຈັ່ງນັບວ່າ ຄວາມເຊື່ອວາງໃຈຂອງ ລາວ ນັ້ນ ເຮັດໃຫ້ ລາວ
ເປັນຜູ້ຊອບທຳ ຖືກຕ້ອງຕໍ່ໜ້າພຣະເຈົ້າແລ້ວ
4:23 ບັດນີ້ ຄຳວ່າ "ນັບວ່າຄວາມເຊື່ອຂອງ ລາວ ໄດ້ເຮັດໃຫ້ເປັນຜູ້ຊອບທຳ" ນັ້ນ
ບໍ່ໄດ້ຂຽນໄວ້ໃຫ້ ລາວ ແຕ່ຜູ້ດຽວ
4:24 ແຕ່ໄດ້ຂຽນໄວ້ໃຫ້ພວກເຮົາຄືກັນ ທີ່ເພິ່ນນັບວ່າເຮົາເປັນຊອບທຳ ຄືພວກເຮົາ
ຜູ້ທີ່ເຊື່ອວາງໃຈໃນພຣະເຈົ້າ ຜູ້ເພິ່ນທີ່ເຮັດໃຫ້ ພຣະເຢຊູເຈົ້າ ຂອງພວກເຮົາ ເປັນ
ຂຶ້ນມາຈາກຕາຍ
4:25 ຊຶ່ງແມ່ນຜູ້ນັ້ນ ທີ່ຖືກມອບໄວ້ຍ້ອນການລະເມີດຂອງພວກຄົນເຮົາ ແລ້ວໄດ້
ເປັນຂຶ້ນມາຈາກຕາຍເພື່ອພວກເຮົາຊິໄດ້ເປັນຄົນຊອບທຳໃນສາຍຕາຂອງພຣະ-
ເຈົ້າໄດ້

# ໂຣມ ບົດທີ 5

5:1 ຈັ່ງຊັ້ນ ບັດເປັນຄົນຊອບທຳດ້ວຍຄວາມເຊື່ອແລ້ວ ພວກເຮົາຈັ່ງມີສັນຕິພາບ
ກັບພຣະເຈົ້າ ໂດຍທາງພຣະເຢຊູຄຣິດເຈົ້າຂອງເຮົາ
5:2 ຊຶ່ງໂດຍທາງ ພຣະເຢຊູ ນັ້ນ ພວກເຮົາຈັ່ງມີສິດໃນພຣະຄຸນຂອງພຣະເຈົ້າທີ່
ພວກເຮົາພວມຢືນຢູ່ນີ້ ເຮົາຈັ່ງສັນລະເສີນໃນຄວາມຫວັງອັນໝັ້ນຄົງວ່າ ພວກ
ເຮົາໄດ້ມີສ່ວນຮ່ວມໃນສະຫງ່າລາສີຂອງພຣະເຈົ້າ
5:3 ແລ້ວບໍ່ແມ່ນແຕ່ນັ້ນຢ່າງດຽວ ເຮົາຈັ່ງມີຄວາມພູມໃຈ ສັນລະເສີນໃນຄວາມ
ທຸກຍາກລຳບາກທີ່ຕ້ອງທົນເອົາ ໂດຍຮູ້ກັນວ່າຄວາມທຸກຍາກນັ້ນໄດ້ເຮັດໃຫ້ເກີດ
ຄວາມທໍຣະຫົດອົດທົນ
5:4 ແລ້ວຄວາມທໍຣະຫົດອົດທົນນັ້ນ ເປັນການທົດສອບເຮັດໃຫ້ເກີດເປັນຜູ້ໃຫຍ່
ແລ້ວການເປັນຜູ້ໃຫຍ່ນັ້ນ ເຮັດໃຫ້ເກີດມີຄວາມຫວັງອັນໝັ້ນຄົງ
5:5 ແລ້ວຄວາມຫວັງອັນໝັ້ນຄົງນັ້ນ ບໍ່ໄດ້ເຮັດໃຫ້ອັບອາຍຂາຍໜ້າ ຍ້ອນວ່າ
ຄວາມຮັກຂອງພຣະເຈົ້າໄດ້ຫລັ່ງໄຫລເຂົ້າສູ່ຈິດໃຈຂອງພວກເຮົາຢູ່ສະເໝີ ໂດຍ
ທາງ ພຣະວິນຍານ ບໍລິສຸດ ຊຶ່ງເພິ່ນໄດ້ໃຫ້ໄວ້ກັບພວກເຮົາຢູ່ແລ້ວ
5:6 ຄື ບັດຍາມຄົນເຮົາ ຜູ້ເປັນຄົນບາບ ຍັງຂາດເຫື່ອຂາດແຮງ ພໍດີ ພຣະຄຣິດ ໄດ້
ລົງມາຕາຍແທນໃນຍາມເໝາະສົມ

5:7 ຄື ບໍ່ຄ່ອຍຊິມີໃຜຊິຕາຍເພື່ອຄົນຊອບທຳອັນຖືກຕ້ອງ ແຕ່ທ່າລາງເທື່ອຜູ້ລາງ
ຄົນ ອາດ ຊິຕາຍເພື່ອຄົນດີກໍໄດ້
5:8 ແຕ່ວ່າ ພຣະເຈົ້າໄດ້ສະແດງຄວາມຮັກແພງຂອງເພິ່ນ ມາປາກົດໃຫ້ກັບຄົນເຮົາ
ທັງຫລາຍແລ້ວ ຄືໃນຍາມທີ່ເຮົາຍັງເປັນຄົນບາບຢູ່ ພຣະຄຣິດ ກໍຍັງລົງມາຕາຍ
ເພື່ອເຮົາ
5:9 ຫລາຍກວ່ານັ້ນອີກ ບັດນີ້ເຮົາໄດ້ເປັນຄົນຊອບທຳຖືກຕ້ອງແລ້ວ ໂດຍພຣະ-
ໂລຫິດຂອງພຣະເຢຊູຄຣິດ ຊຶ່ງພວກເຮົາຊິໄດ້ລອດພົ້ນຈາກການໂມໂຫຂອງ
ພຣະເຈົ້າໂດຍທາງເພິ່ນນັ້ນ
5:10 ຄື ຄັນວ່າ ໃນຕອນທີ່ຄົນເຮົາຍັງເປັນສັດຕູກັນກັບພຣະເຈົ້າ ບັດນີ້ເຮົາໄດ້ຮັບ
ການຄືນດີກັນກັບເພິ່ນແລ້ວ ໂດຍການຕາຍແທນຂອງ ພຣະບຸດ ຂອງເພິ່ນ ແລ້ວ
ຫລາຍກວ່ານັ້ນອີກ ຄົນເຮົາຊິໄດ້ລອດພົ້ນໂດຍຊີວິດຂອງເພິ່ນ
5:11 ແລ້ວບໍ່ແມ່ນພຽງແຕ່ນັ້ນ ຄົນເຮົາກໍຍັງສັນລະເສີນພຣະເຈົ້າໂດຍທາງພຣະເຢ-
ຊູຄຣິດເຈົ້າຂອງເຮົາ ຜູ້ເພິ່ນທີ່ເຮັດໃຫ້ຄົນເຮົາຄືນດີກັນກັບພຣະເຈົ້າໄດ້ແລ້ວ
5:12 ຈັ່ງຊັ້ນ ຄວາມບາບໄດ້ເຂົ້າມາສູ່ໂລກໂດຍທາງຄົນໆ ດຽວ ແລ້ວຄວາມຕາຍ**
ກໍໄດ້ເຂົ້າມາຍ້ອນບາບນັ້ນເປັນເຫດ ແລ້ວຄວາມຕາຍນັ້ນຈັ່ງໄດ້ລາມໄປເຖິງທົ່ວ
ໝົດຄູ່ຄົນ ຍ້ອນວ່າຄູ່ຄົນໄດ້ເຮັດບາບ
5:13 (ຄື ກ່ອນມີກົດບັນຍັດ ຄວາມບາບໄດ້ຢູ່ໃນໂລກແລ້ວ ແຕ່ວ່າບໍ່ມີການຖືໂທດ
ບາບກ່ອນກົດບັນຍັດ
5:14 ຈັ່ງໃດກໍຕາມ ຄວາມຕາຍໄດ້ຄອບງຳຕະຫລອດມາ ຕັ້ງແຕ່ສະໄໝພໍ່ເດີມ ອາ-
ດັມ ມາຮອດສະໄໝ ໂມເຊ ແມ່ນແຕ່ຮອດຄົນທີ່ບໍ່ໄດ້ເຮັດບາບແນວດຽວກັນກັບ
ພໍ່ເດີມ ອາດັມ ຜູ້ເປັນແບບຢ່າງເວົ້າເຖິງຜູ້ເພິ່ນທີ່ຊິມາໃນພາຍໜ້ານັ້ນ
5:15 ແຕ່ພຣະຄຸນທີ່ພຣະເຈົ້າປະທານໃຫ້ ກໍບໍ່ໄດ້ຄືຄວາມຜິດບາບນັ້ນດອກ ຄືຄັນ
ຫລາຍຄົນຕ້ອງຕາຍຍ້ອນຄວາມຜິດບາບຂອງຄົນຜູ້ດຽວ ຫລາຍກວ່ານັ້ນອີກ
ພຣະຄຸນຂອງພຣະເຈົ້າ ກັບຊີວິດອັນຕະຫລອດໄປເປັນນິດທີ່ເພິ່ນໄດ້ປະທານໃຫ້
ໂດຍພຣະຄຸນນັ້ນ ໄດ້ຜ່ານມາຍັງພວກເຮົາໂດຍຄົນໆ ດຽວ ຄື ພຣະເຢຊູຄຣິດ ກໍມີ
ຢ່າງເຫລືອລົ້ນໃຫ້ແກ່ຄົນຫລວງຫລາຍ

5:16 ແລ້ວພຣະຄຸນທີ່ພຣະເຈົ້າປະທານໃຫ້ນັ້ນ ກໍບໍ່ຄືບາບທີ່ມາທາງພໍ່ເດີມ ອາດັມ
ຜູ້ເຮັດບາບນັ້ນ ຄືການພິພາກສາໄດ້ເກີດຈາກຄວາມຜິດບາບທີ່ ອາດັມ ໄດ້ເຮັດ
ເທື່ອດຽວນັ້ນ ຈັ່ງເປັນເຫດໃຫ້ຄົນຫລວງຫລາຍຕ້ອງເຂົ້າສູ່ການພິພາກສານໍາ ແຕ່
ພຣະຄຸນທີ່ພຣະເຈົ້າປະທານໃຫ້ນັ້ນ ໄດ້ເປັນເຫດໃຫ້ເປັນຜູ້ຊອບທໍາ
5:17 ຍ້ອນວ່າ ຄັ້ນບາບຂອງຄົນໆ ດຽວໄດ້ເປັນເຫດໃຫ້ຄວາມຕາຍຄອບງໍາໄປທົ່ວ
ຫລາຍກວ່ານັ້ນອີກ ສ່ວນຜູ້ທີ່ຮັບເອົາພຣະຄຸນທີ່ມີຢູ່ທີ່ພຣະເຈົ້າປະທານໃຫ້ຢ່າງ-
ເຫລືອລົ້ນ ກັບຄວາມຊອບທໍາ ຜູ້ນັ້ນກໍຊິໄດ້ມີຊີວິດ ກັບປົກຄອງໂດຍອີກຜູ້ໜຶ່ງ ຄື
ພຣະເຢຊູຄຣິດ )
5:18 ຈັ່ງຊັ້ນ ການລົງໂທດໄດ້ເຂົ້າສູ່ຄົນໝົດທັງມວນ ຍ້ອນການລະເມີດໄປເທື່ອ
ດຽວຂອງຄົນໆ ໜຶ່ງ ແຕ່ວ່າ ການເຮັດດີອັນຊອບທໍາຂອງອີກຄົນໜຶ່ງເທື່ອດຽວ
ໄດ້ເປັນເຫດໃຫ້ການປົດປ່ອຍຍົກໂທດໄດ້ມາສູ່ຄູ່ຄົນ ເຖິງໄດ້ຊີວິດອັນຕະຫລອດ-
ໄປເປັນນິດໂດຍບໍ່ຄິດມູນຄ່າ
5:19 ຄື ຍ້ອນການບໍ່ເຊື່ອຟັງຂອງຄົນໆ ໜຶ່ງ ຄົນຫລວງຫລາຍໄດ້ເຂົ້າສູ່ສະພາບ
ເປັນຄົນບາບ ແລ້ວຍ້ອນການເຊື່ອຟັງຂອງອີກຄົນໜຶ່ງ ເປັນເຫດໃຫ້ມີຄົນຫລວງ-
ຫລາຍຊິໄດ້ຮັບສູ່ສະພາບເປັນຄົນຊອບທໍາ
5:20 ຄືວ່າ ກົດບັນຍັດມີມາເພື່ອການລ່ວງລະເມີດຊິໄດ້ປາກົດຊັດເຈນຫລາຍຂຶ້ນ
ແຕ່ວ່າໜ້ອງໃດທີ່ມີບາບຫລາຍ ໜ້ອງນັ້ນກໍມີພຣະຄຸນແຮງຫລາຍກວ່າ
5:21 ດ້ວຍວ່າ ບາບໄດ້ຄອບງໍາເຖິງຄວາມຕາຍສໍ່າໃດ ພຣະຄຸນໄດ້ປົກຄອງດ້ວຍ
ຄວາມຊອບທໍາເຖິງຊີວິດອັນຕະຫລອດໄປເປັນນິດສໍ່ານັ້ນ ໂດຍທາງພຣະເຢຊູ-
ຄຣິດເຈົ້າຂອງພວກເຮົາ

## ໂຣມ ບົດທີ 6

6:1 ຄັ້ນເປັນຈັ່ງຊັ້ນແລ້ວ ເຮົາຊິວ່າຈັ່ງໃດ ເຮົາຄວນຊິເຮັດບາບຕໍ່ໄປຄືເກົ່າອີກ
ເພື່ອພຣະຄຸນຊິໄດ້ປາກົດແຮງຫລາຍຂຶ້ນບໍ້
6:2 ເປັນໄປບໍ່ໄດ້ເລີຍ ຄືພວກເຮົາຜູ້ທີ່ຕາຍຕໍ່ບາບແລ້ວ ຊິໃຊ້ຊີວິດຢູ່ໃນບາບຕໍ່ໄປ
ອີກເຮັດຫຍັງ

6:3 ຄື ພວກເຈົ້າບໍ່ຮູ້ກັນບໍ ວ່າຜູ້ໃດທີ່ຮັບການເຂົ້າມີສ່ວນຮ່ວມ**ໃນ ພຣະເຢຊູຄຣິດ
ແລ້ວ ກໍໄດ້ຮັບການເຂົ້າມີສ່ວນຮ່ວມໃນການຕາຍຂອງເພິ່ນ
6:4 ຈັ່ງຊັ້ນ ຄົນເຮົາທີ່ຢູ່ໃນ ພຣະເຢຊູຄຣິດ ໄດ້ຖືກຝັງໄວ້ ເຂົ້າມີສ່ວນຮ່ວມໃນການ
ຕາຍນຳເພິ່ນ ແລ້ວການທີ່ ພຣະຄຣິດ ໄດ້ເປັນຂຶ້ນມາຈາກຕາຍນັ້ນ ກໍໄດ້ໂດຍ
ອຳນາດສະຫງ່າລາສີຂອງພຣະເຈົ້າຜູ້ເປັນພໍ່ ຈັ່ງຊັ້ນ ພວກເຮົາຄວນຊິດຳເນີນ
ຕາມຊີວິດໃໝ່ນັ້ນນຳ
6:5 ຄື ຄັນພວກເຮົາໄດ້ຖືກຝັງມີສ່ວນຮ່ວມໃນການຕາຍໃນແບບດຽວກັນກັບເພິ່ນ
ແລ້ວ ເຮົາກໍຊິເປັນຂຶ້ນມາຈາກຕາຍໃນແບບດຽວກັນກັບເພິ່ນຄືກັນ
6:6 ຄືເຮົາຮູ້ວ່າ ຄົນເກົ່າຂອງເຮົາໄດ້ຖືກຄຶງເທິງໄມ້ກາງແຂນນຳເພິ່ນແລ້ວ ເພື່ອໂຕ
ເກົ່າທີ່ເຮັດບາບນັ້ນຊິໝົດສິ້ນສຸດໄປ ເພື່ອພວກເຮົາບໍ່ຕ້ອງເປັນຂີ້ຂ້າຂອງບາບ
ອີກຕໍ່ໄປເລີຍ
6:7 ຄື ຜູ້ທີ່ຕາຍໄປແລ້ວ ກໍໄດ້ຮັບການປົດປ່ອຍຈາກອຳນາດຂອງບາບ
6:8 ບັດນີ້ ຄັນເຮົາໄດ້ຕາຍກັບ ພຣະຄຣິດ ແລ້ວ ເຮົາໝັ້ນໃຈວ່າ ເຮົາຊິມີຊີວິດດຳ-
ລົງຢູ່ກັບເພິ່ນນຳ
6:9 ໂດຍຮູ້ວ່າ ພຣະຄຣິດ ຜູ້ທີ່ເປັນຂຶ້ນມາຈາກຕາຍແລ້ວ ກໍຊິບໍ່ຕາຍອີກຕໍ່ໄປ ກໍ
ຍ້ອນຄວາມຕາຍນັ້ນບໍ່ມີອຳນາດເໜືອເພິ່ນອີກເລີຍ
6:10 ຄືວ່າ ການທີ່ ພຣະເຢຊູ ຕາຍນັ້ນ ເພິ່ນກໍຕາຍເພື່ອບາບຂອງພວກເຮົາພຽງ
ເທື່ອດຽວ ແຕ່ທີ່ເພິ່ນມີຊີວິດດຳລົງຢູ່ນີ້ ເພິ່ນກໍມີຊີວິດຢູ່ເພື່ອພຣະເຈົ້າ
6:11 ແລ້ວໃນທຳນອງດຽວກັນ ໃຫ້ພວກເຈົ້າຖືວ່າ ໂຕເອງໄດ້ຕາຍຕໍ່ບາບແລ້ວເດີ້
ແຕ່ມີຊີວິດຢູ່ເພື່ອພຣະເຈົ້າ ໂດຍໃນພຣະເຢຊູຄຣິດເຈົ້າຂອງພວກເຮົາ
6:12 ຈັ່ງຊັ້ນ ຢ່າໃຫ້ອຳນາດຂອງບາບຄອບງຳກາຍອະນິຈັງທີ່ຕ້ອງຕາຍຂອງເຈົ້າເດີ້
ທີ່ວ່າຊິຕ້ອງເຊື່ອຟັງຕາມຕັນຫາຂອງມັນນັ້ນ
6:13 ກັບຢ່າຍອມປ່ອຍອະໄວຍະວະຂອງໂຕເຈົ້າໄວ້ເປັນເຄື່ອງມືຂອງບາບ ເພື່ອ
ເຮັດແນວບໍ່ຖືກບໍ່ແມ່ນຂອງມັນ ແຕ່ໃຫ້ມອບໂຕຂອງເຈົ້າໄວ້ໃຫ້ພຣະເຈົ້າ ຄືກັນ-
ກັບຄົນທີ່ເປັນຂຶ້ນມາຈາກຕາຍ ເຂົ້າສູ່ຊີວິດໃໝ່ແລ້ວ ກັບໃຫ້ມອບອະໄວຍະວະ
ຂອງໂຕເຈົ້າໄວ້ເປັນເຄື່ອງມືເຮັດແນວຖືກແນວແມ່ນຍ້ອນເຫັນແກ່ພຣະເຈົ້າ

6:14 ຄືບາບບໍ່ມີອຳນາດປົກຄອງເໜືອເຈົ້າຕໍ່ໄປອີກ ຍ້ອນວ່າເຈົ້າບໍ່ໄດ້ຢູ່ໃຕ້ກົດບັນ-
ຍັດ ແຕ່ຢູ່ໃຕ້ຮົ່ມພຣະຄຸນພຣະເຈົ້າ
6:15 ຄັນບໍ່ຊັ້ນຊິວ່າຈັ່ງໃດດີ ຊິເຮັດບາບຍ້ອນວ່າເຮົາບໍ່ໄດ້ຢູ່ພາຍໃຕ້ກົດບັນຍັດຊັ້ນ
ບໍ້ ແຕ່ຢູ່ໃຕ້ຮົ່ມພຣະຄຸນນັ້ນ ບໍ່ໄດ້ເລີຍ
6:16 ພວກເຈົ້າບໍ່ຮູ້ບໍ້ວ່າ ບັດຍາມເຈົ້າຍອມເຊື່ອຟັງນາຍຜູ້ໃດ ເຈົ້າກໍຍອມເປັນຂ້າ-
ທາດຂອງນາຍຜູ້ທີ່ເຈົ້າເຊື່ອຟັງນັ້ນ ບໍ່ວ່າຊິເຊື່ອຟັງບາບຊຶ່ງນຳໄປສູ່ຄວາມຕາຍ
ຫລືເຊື່ອຟັງຄວາມຊອບທຳທີ່ນຳໄປສູ່ຊີວິດ
6:17 ແຕ່ວ່າ ຂອບໃຈພຣະເຈົ້າທີ່ວ່າ ແຕ່ກ່ອນພວກເຈົ້າເປັນຂ້າທາດຂອງບາບ ແຕ່
ບັດນີ້ພວກເຈົ້າໄດ້ເຊື່ອຟັງຫລັກຄຳສອນຈາກໃຈຈິງ ທີ່ນຳມາໃຫ້ເຈົ້າແລ້ວນັ້ນ
6:18 ແລ້ວບັດນີ້ ໂດຍທີ່ວ່າພວກເຈົ້າໄດ້ຮັບການປົດປ່ອຍໃຫ້ພົ້ນຈາກການເປັນ
ຂ້າທາດຂອງບາບແລ້ວ ພວກເຈົ້າກໍກາຍເປັນຂ້າທາດຮັບໃຊ້ຂອງຄວາມຊອບທຳ
6:19 ທີ່ຂ້ອຍເວົ້ານີ້ ຂ້ອຍກໍເວົ້າຢ່າງຄົນທຳມະດາຊື່ໆ ຍ້ອນພວກເຈົ້າກໍຍັງອ່ອນ
ກຳລັງຍ້ອນເນື້ອໜັງ ຄືແຕ່ກ່ອນພວກເຈົ້າເຄີຍປ່ອຍອະໄວຍະວະຂອງໂຕເຈົ້າ
ໃຫ້ເປັນຂ້າທາດຂອງແນວສົກກະປົກ ຊຶ່ງເປັນແນວຊົ່ວຊ້ອນແນວຊົ່ວ ແຕ່ບັດນີ້
ໃຫ້ພວກເຈົ້າໃຊ້ອະໄວຍະວະຂອງໂຕເຈົ້າ ໃຫ້ເປັນຂ້າທາດຮັບໃຊ້ຂອງຄວາມ
ຊອບທຳເດີ້ ກໍເພື່ອເຫັນແກ່ຄວາມບໍລິສຸດ
6:20 ຍ້ອນວ່າ ຕອນພວກເຈົ້າເປັນຂ້າທາດຂອງບາບນັ້ນ ພວກເຈົ້າກໍຍັງປ່ອຍໂຕ
ເປັນຕາລັ່ງກຽດໄປ ຄືບໍ່ໄດ້ຢູ່ໃນການປົກຄອງຂອງຄວາມຊອບທຳ
6:21 ຕອນນັ້ນ ຊີວິດຂອງພວກເຈົ້າໄດ້ຜົນປະໂຫຍດດີອີຫຍັງ ໃນແນວເປັນຕາອາຍ
ທີ່ພວກເຈົ້າເຄີຍເຮັດມາ ຊຶ່ງປາຍທາງຂອງການເຮັດແນວນັ້ນເຂົ້າສູ່ຄວາມຕາຍ
6:22 ແຕ່ທັນທີ ພວກເຈົ້າໄດ້ພົ້ນຈາກການເປັນຂ້າທາດຂອງບາບ ມາເປັນຜູ້ຮັບໃຊ້
ຂອງພຣະເຈົ້າແລ້ວ ມີຜົນຊີວິດໃນທາງບໍລິສຸດ ແລ້ວໃນທີ່ສຸດຊິໄດ້ເຂົ້າສູ່ຊີວິດ
ອັນຕະຫລອດໄປເປັນນິດນັ້ນ
6:23 ໂດຍວ່າ ຄ່າຈ້າງຂອງການເຮັດບາບຄືຄວາມຕາຍ ແຕ່ຊີວິດທີ່ພຣະເຈົ້າປະ-
ທານໃຫ້ນັ້ນ ຄືຊີວິດອັນຕະຫລອດໄປເປັນນິດໃນພຣະເຢຊູຄຣິດເຈົ້າຂອງເຮົາ

# ໂຣມ ບົດທີ 7

7:1 ຄືວ່າ ພີ່ນ້ອງທັງຫລາຍ ເອີຍ ພວກເຈົ້າບໍ່ຮູ້ບໍ້ ວ່າ ກົດໝາຍມີອຳນາດເໜືອຄົນ
ໃດຄົນໜຶ່ງບັດຜູ້ນັ້ນຍັງມີຊີວິດຢູ່ (ຂ້ອຍພວມເວົ້າກັບຜູ້ຄົນທີ່ມີຄວາມຮູ້ທາງກົດໝ
າຍ)
7:2 ຍົກໂຕຢ່າງ ຄື ແມ່ຍິງຜູ້ໃດທີ່ມີຜົວຖືກຕ້ອງຕາມກົດໝາຍ ນາງໄດ້ຖືກຜູກພັນ
ໄວ້ກັບຜົວໃນຍາມເວລາຜົວຂອງນາງຍັງມີຊີວິດຢູ່ ແຕ່ຄັ່ນຜົວຂອງນາງຕາຍຈາກ
ກັນແລ້ວ ນາງກໍຊິຖືກປົດປ່ອຍໃຫ້ເປັນອິດສະຫລະຈາກການຜູກພັນທາງກົດໝ
າຍເລື່ອງການສົມລົດນັ້ນ
7:3 ຈັ່ງຊັ້ນ ຄັ່ນນາງນັ້ນໄປເອົາຜົວໃໝ່ໃນຍາມທີ່ຜົວເດີມຍັງມີຊີວິດຢູ່ ນາງກໍຊິ
ເປັນຍິງລ່ວງປະເວນີ ແຕ່ຄັ່ນຜົວເດີມຕາຍຈາກໄປ ນາງໄດ້ພົ້ນຈາກກົດໝາຍຂໍ້
ການແຕ່ງງານນັ້ນແລ້ວ ນາງກໍບໍ່ໄດ້ເປັນຍິງ ລ່ວງປະເວນີ ແມ່ນແຕ່ນາງຊິແຕ່ງ
ເອົາຜົວໃໝ່
7:4 ຈັ່ງຊັ້ນ ພີ່ນ້ອງທັງຫລາຍຂອງຂ້ອຍເອີຍ ບັດນີ້ພວກເຈົ້າໄດ້ຕາຍຈາກການຜູກ
ພັນໄວ້ຕໍ່ກົດບັນຍັດແລ້ວ ໂດຍການຕາຍທາງພຣະກາຍຂອງພຣະຄຣິດ ພວກ
ເຈົ້າຈັ່ງໄດ້ຖືກປົດປ່ອຍແລ້ວ ມີສິດເປັນຄູ່ສົມລົດຂອງຜູ້ອື່ນໄດ້ ແມ່ນຜູ້ນັ້ນທີ່ເປັນ
ຂຶ້ນມາຈາກຕາຍແລ້ວນັ້ນ ກໍເພື່ອພວກເຮົາຊິໄດ້ເກີດຜົນອັນດີ ຊຶ່ງເປັນທີ່ຖວາຍ
ກຽດແດ່ພຣະເຈົ້າ
7:5 ຄື ຕອນພວກເຮົາຢູ່ໃນເນື້ອໜັງ ຕັນຫາແຫ່ງເພດອັນຊົ່ວຂອງບາບຊຶ່ງປາກົດ
ອອກມາ ຍ້ອນກົດບັນຍັດນັ້ນ ເຮັດໃຫ້ອະໄວຍະວະຂອງເຮົາເກີດຜົນທີ່ນຳໄປສູ່
ຄວາມຕາຍ
7:6 ແຕ່ບັດນີ້ ເຮົາໄດ້ພົ້ນຈາກກົດບັນຍັດແລ້ວ ໂດຍໄດ້ຕາຍຕໍ່ກົດບັນຍັດທີ່ເຄີຍ
ຜູກມັດເຮົາໄວ້ ຈັ່ງມີອິດສະຫລະທີ່ຊິໃຫ້ຈິດວິນຍານດຳເນີນຊີວິດໃໝ່ຕາມລະບົບ
ໃໝ່ ແທນທີ່ຊິປະຕິບັດຕາມລາຍລັກອັກສອນໃນຂໍ້ກົດບັນຍັດເກົ່ານັ້ນ
7:7 ຄັ່ນຈັ່ງຊັ້ນ ເຮົາຊິວ່າຈັ່ງໃດ ຊິວ່າກົດບັນຍັດເປັນໂຕບາບຊັ້ນບໍ້ ບໍ່ແມ່ນແລ້ວ
ເປັນໄປບໍ່ໄດ້ເລີຍ ຄືຂ້ອຍຊິບໍ່ຮູ້ຈັກບາບນອກຈາກມີກົດບັນຍັດທີ່ຊີ້ແຈງໄວ້ ຄື

ຂ້ອຍຊິບໍ່ຮູ້ຈັກວ່າ ການຂີ້ໂລບ ເປັນບາບ ນອກຈາກກົດບັນຍັດບົ່ງບອກວ່າ “ຢ່າ
ຂີ້ໂລບ”
7:8 ແຕ່ວ່າ ບັດນີ້ອຳນາດບາບໃນໂຕຂ້ອຍນັ້ນ ໄດ້ສວຍໂອກາດຝ່າຝືນຂໍ້ກົດບັນຍັດ
ເຮັດຕັນຫາແຫ່ງເພດຫລາຍອັນຫລາຍແນວໃນໂຕຂ້ອຍ ສະຫລຸບແລ້ວຄັ່ນບໍ່ມີ
ກົດບັນຍັດບົ່ງບອກ ບາບນັ້ນກໍຊິຕາຍໝົດໄປ
7:9 ຄືແຕ່ກ່ອນນັ້ນ ຂ້ອຍເຄີຍໃຊ້ຊີວິດຢູ່ນອກກົດບັນຍັດ ແຕ່ບັດມີກົດບັນຍັດມາ
ແລ້ວ ອຳນາດບາບກໍກັບລຸກຂຶ້ນອີກ ແລ້ວຂ້ອຍຈັ່ງຕາຍໄປ
7:10 ແລ້ວຂໍ້ບັນຊານັ້ນ ຊຶ່ງມີໜ້າທີ່ນຳຂ້ອຍໄປສູ່ຊີວິດ ກັບເປັນເຫດທີ່ໂຕຂ້ອຍຕ້ອງ
ເຂົ້າສູ່ຄວາມຕາຍ
7:11 ຄື ບາບໃນໂຕຂ້ອຍນັ້ນ ໄດ້ສວຍໂອກາດຝ່າຝືນຂໍ້ບັນຊານັ້ນ ຈັ່ງໄດ້ລໍ້ລວງ
ຂ້ອຍ ເຖິງປະຫານໂຕຂ້ອຍນຳ
7:12 ຈັ່ງຊັ້ນ ກົດບັນຍັດລ້ວນແຕ່ເປັນສິ່ງສັກສິດບໍລິສຸດ ແລ້ວຂໍ້ບັນຊາຄູ່ຂໍ້ໃນກົດ-
ບັນຍັດນັ້ນ ລ້ວນແຕ່ເປັນທັງບໍລິສຸດ ທັງຍຸດຕິທຳ ທັງດີງາມນຳ
7:13 ຈັ່ງຊັ້ນ ແນວທີ່ດີງາມນັ້ນກັບເປັນເຫດໃຫ້ຂ້ອຍຕ້ອງຕາຍບໍ້ ບໍ່ແມ່ນແລ້ວ ເປັນ
ໄປບໍ່ໄດ້ເລີຍ ຄືມັນເປັນອຳນາດຊົ່ວໃນໂຕຂ້ອຍຕ່າງຫາກບັດໄດ້ປາກົດອອກມາ
ໃນຮູບແບບວ່າເປັນບາບ ຈັ່ງເປັນເຫດໃຫ້ຂ້ອຍຕ້ອງຕາຍ ຍ້ອນໄດ້ຝ່າຝືນຂໍ້ບັນ-
ຊາອັນດີງາມນັ້ນ ຄືບາບທີ່ໄດ້ປາກົດທາງອັນດີງາມນັ້ນ ເປັນເຫດໃຫ້ຂ້ອຍຕ້ອງ
ຕາຍ ຈັ່ງເຮັດໃຫ້ເຫັນວ່າທາດແທ້ຂອງບາບນັ້ນ ວ່າມັນຊົ່ວສໍ່າໃດ
7:14 ຄືພວກເຮົາຮູ້ຢູ່ແລ້ວວ່າ ກົດບັນຍັດນັ້ນກໍເປັນອຳມະຕະຢູ່ຝ່າຍວິນຍານ ແຕ່
ຂ້ອຍກໍເປັນອະນິຈັງຢູ່ຝ່າຍເນື້ອໜັງ ຖືກຂາຍໄປຕົກຢູ່ໃຕ້ອຳນາດຂອງບາບແລ້ວ
7:15 ຊຶ່ງວ່າແນວທີ່ຂ້ອຍເຮັດນີ້ ຂ້ອຍບໍ່ເຂົ້າໃຈເລີຍ ຄືແນວທີ່ບໍ່ຄວນຊິເຮັດ ຂ້ອຍກໍ-
ໄດ້ເຮັດ ແລ້ວແນວທີ່ປາດຖະໜາຄວນຊິເຮັດ ຂ້ອຍກໍບໍ່ໄດ້ເຮັດ ແຕ່ໄດ້ກັບໄປ
ເຮັດແນວບໍ່ຖືກບໍ່ແມ່ນທີ່ຂ້ອຍຊັງ
7:16 ຈັ່ງຊັ້ນ ຄັ່ນຂ້ອຍໄດ້ເຮັດແນວທີ່ຂ້ອຍບໍ່ປາດຖະໜາທີ່ຊິເຮັດ ຂ້ອຍກໍຍອມເຫັນ
ນຳກົດບັນຍັດວ່າ ມັນດີແລ້ວ

7:17 ບັດນີ້ ມັນບໍ່ແມ່ນໂຕຂ້ອຍເອງທີ່ເຮັດຕໍ່ໄປ ແຕ່ເປັນອຳນາດຂອງບາບຢູ່ໃນໂຕ
ຂ້ອຍຕ່າງຫາກ ທີ່ພາເຮັດ
7:18 ຄື ຂ້ອຍຮູ້ຢູ່ແລ້ວວ່າ ໃນໂຕຂ້ອຍນີ້ (ຄືໃນຊີວິດຝ່າຍເນື້ອໜັງຂອງຂ້ອຍ) ບໍ່ມີ
ຄວາມດີປະການໃດເລີຍ ຄືເຈດຕະນາດີຂອງຂ້ອຍກໍມີຢູ່ ແຕ່ຄວາມສາມາດຊິ
ເຮັດການດີນັ້ນຂ້ອຍບໍ່ມີເລີຍ
7:19 ຄື ການດີງາມທີ່ຂ້ອຍປາດຖະໜາຢາກເຮັດນັ້ນ ຂ້ອຍກໍເຮັດບໍ່ໄດ້ເລີຍ ແຕ່
ການຊົ່ວແນວບໍ່ດີທີ່ຂ້ອຍບໍ່ຢາກເຮັດ ຂ້ອຍກໍຍັງເຮັດຢູ່
7:20 ບັດນີ້ ຄັນແມ່ນຂ້ອຍຍັງເຮັດແນວທີ່ຂ້ອຍບໍ່ປາດຖະໜາຊິເຮັດນັ້ນ ມັນກໍບໍ່
ແມ່ນໂຕຂ້ອຍທີ່ເປັນຜູ້ເຮັດດອກ ແຕ່ເປັນອຳນາດບາບຊຶ່ງຢູ່ໃນໂຕຂ້ອຍຕ່າງຫາກ
ທີ່ພາເຮັດ
7:21 ແຕ່ບັດນີ້ ຂ້ອຍເຫັນວ່າມີກົດເກນແນວໜຶ່ງທີ່ກ່ຽວກັນຢູ່ ຄືຍາມໃດຂ້ອຍຕັ້ງໃຈ
ຊິເຮັດຄວາມດີງາມ ຄວາມຊົ່ວກໍຍັງຕິດຢູ່ກັບໂຕຂ້ອຍນີ້
7:22 ຄື ສ່ວນເລິກໃນໃຈຂອງຂ້ອຍກໍຊົມຊື່ນຍິນດີໃນກົດບັນຍັດຂອງພຣະເຈົ້າ
7:23 ແຕ່ໃນໂຕຂ້ອຍເຫັນກົດອີກແນວໜຶ່ງຢູ່ໃນອະໄວຍະວະຂອງໂຕຂ້ອຍ ຊຶ່ງມັນ
ຕໍ່ສູ້ກັນກັບກົດຂອງຄວາມປາດຖະໜາດີໃນຈິດໃຈຂອງຂ້ອຍ ຊັກນຳຂ້ອຍໃຫ້ຢູ່
ໃຕ້ການບັງຄັບກົດຂອງບາບຊຶ່ງຢູ່ໃນອະໄວຍະວະຂອງໂຕຂ້ອຍນັ້ນ
7:24 ເບິ່ງແມ້ ຂ້ອຍນີ້ເປັນຄົນທຸເລດແທ້ ໃຜແໜ່ຊິສາມາດຊ່ອຍຂ້ອຍໃຫ້ພົ້ນຈາກ
ຮ່າງຂອງຄວາມຕາຍນີ້ໄດ້
7:25 ຂ້ອຍສາທຸການພຣະເຈົ້າໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຄືສະ-
ຫລຸບແລ້ວ ຝ່າຍຈິດໃຈຂອງຂ້ອຍນີ້ ເອງ ຂ້ອຍເອງຮັບໃຊ້ກົດບັນຍັດອັນດີງາມ
ຂອງພຣະເຈົ້າ ແຕ່ຝ່າຍເນື້ອໜັງນັ້ນ ຂ້ອຍກໍຮັບໃຊ້ກົດຂອງບາບ

## ໂຣມ ບົດທີ 8

8:1 ຈັ່ງຊັ້ນ ບັດນີ້ບໍ່ມີການຕັດສິນລົງໂທດສຳລັບຄົນທັງຫລາຍທີ່ຢູ່ໃນ ພຣະເຢຊູ-
ຄຣິດ ຊຶ່ງບໍ່ໄດ້ດຳເນີນຊີວິດຕາມຝ່າຍເນື້ອໜັງ ແຕ່ໄດ້ດຳເນີນຊີວິດຕາມການຊົງ-
ນຳຂອງ ພຣະວິນຍານ

8:2 ຍ້ອນວ່າ ກົດຂອງ ພຣະວິນຍານ ຊຶ່ງເປັນຊີວິດໃນ ພຣະເຢຊູຄຣິດ ໄດ້ເຮັດໃຫ້
ຂ້ອຍພົ້ນຈາກກົດຂອງບາບກັບຄວາມຕາຍ
8:3 ໂດຍວ່າ ແນວທີ່ກົດບັນຍັດບໍ່ສາມາດເຮັດໄດ້ ຍ້ອນວ່າເນື້ອໜັງອ່ອນກຳລັງ
ພຣະເຈົ້າເລີຍເຮັດໄດ້ໂດຍໃຊ້ ພຣະບຸດ ຂອງເພິ່ນລົງມາສວມສະພາບຄືກັນກັບ
ມະນຸດຜູ້ເປັນບາບ ເພື່ອຊີໄຖ່ເຂົາອອກຈາກສະພາບບາບນັ້ນ ໂດຍຮັບເປັນໂທດ
ບາບໃນເນື້ອໜັງຂອງເພິ່ນ**
8:4 ເພື່ອຄວາມຊອບທຳຂອງກົດບັນຍັດນັ້ນຊິໄດ້ສຳເລັດໃນພວກຄົນເຮົາ ຜູ້ທີ່ບໍ່ໄດ້
ໃຊ້ຊີວິດຕາມເນື້ອໜັງ ແຕ່ຕາມການຊົງນຳຂອງ ພຣະວິນຍານ
8:5 ຍ້ອນວ່າ ຜູ້ຄົນທັງຫລາຍທີ່ໃຊ້ຊີວິດຕາມເນື້ອໜັງກໍໄດ້ປັກໃຈໃນແນວຂອງ
ເນື້ອໜັງ ແຕ່ຜູ້ຄົນທັງຫລາຍທີ່ໃຊ້ຊີວິດຕາມການຊົງນຳຂອງ ພຣະວິນຍານ ກໍປັກ
ໃຈໃນແນວຂອງ ພຣະວິນຍານ
8:6 ດ້ວຍວ່າ ໃຈທີ່ຈົດຈໍ່ຢູ່ກັບສິ່ງຝ່າຍເນື້ອໜັງນັ້ນ ກໍເປັນການຈົດຈໍ່ຢູ່ກັບຄວາມ
ຕາຍ ແຕ່ໃຈທີ່ຈົດຈໍ່ຢູ່ກັບສິ່ງຝ່າຍ ພຣະວິນຍານ ກໍເປັນການຈົດຈໍ່ຢູ່ກັບຊີວິດ ກັບ
ສັນຕິພາບ
8:7 ໂດຍວ່າ ໃຈທີ່ຈົດຈໍ່ຢູ່ກັບສິ່ງຝ່າຍເນື້ອໜັງກໍເປັນປະຕິປັກຕໍ່ຕ້ານພຣະເຈົ້າ
ຍ້ອນວ່າມັນບໍ່ຍອມຢູ່ໃຕ້ກົດບັນຍັດຂອງພຣະເຈົ້າ ແລ້ວບໍ່ ອາດ ຢູ່ໃຕ້ກົດບັນຍັດ
ນັ້ນໄດ້ເລີຍ
8:8 ຈັ່ງຊັ້ນ ຜູ້ທີ່ຢູ່ຝ່າຍເນື້ອໜັງຊິເປັນທີ່ຊອບຂອງພຣະເຈົ້າບໍ່ໄດ້ເລີຍ
8:9 ແຕ່ວ່າ ຄັນ ພຣະວິນຍານ ຂອງພຣະເຈົ້າສະຖິດຢູ່ໃນໂຕເຈົ້າ ເຈົ້າກໍບໍ່ໄດ້ຢູ່ຝ່າຍ
ເນື້ອໜັງແລ້ວ ແຕ່ຢູ່ຝ່າຍ ພຣະວິນຍານ ແຕ່ບັດນີ້ຄັນຜູ້ໃດບໍ່ມີ ພຣະວິນຍານ
ຂອງ ພຣະຄຣິດ ສະຖິດຢູ່ ຜູ້ນັ້ນກໍບໍ່ແມ່ນຄົນຂອງພຣະເຈົ້າ
8:10 ແລ້ວຄັນ ພຣະຄຣິດ ຢູ່ໃນໂຕເຈົ້າແລ້ວ ແມ່ນແຕ່ຮ່າງກາຍເປັນຂອງຕາຍຍ້ອນ
ບາບ ຈິດວິນຍານຂອງເຈົ້າມີຊີວິດຍ້ອນຄວາມຊອບທຳ
8:11 ແຕ່ວ່າ ຄັນ ພຣະວິນຍານ ຂອງເພິ່ນຜູ້ທີ່ບັນດານໃຫ້ ພຣະເຢຊູ ເປັນຂຶ້ນມາ
ຈາກຕາຍ ໄດ້ສະຖິດຢູ່ໃນເຈົ້າແລ້ວ ພຣະເຈົ້າຜູ້ທີ່ບັນດານໃຫ້ ພຣະຄຣິດ ເປັນຂຶ້ນ

ມາຈາກຕາຍນັ້ນ ຊິໂຜດໃຫ້ກາຍອະນິຈັງຂອງເຈົ້າມີຊີວິດໂດຍ ພຣະວິນຍານ
ຂອງເພິ່ນ ຜູ້ທີ່ສະຖິດຢູ່ໃນໂຕເຈົ້ານັ້ນ
8:12 ຈັ່ງຊັ້ນ ພີ່ນ້ອງທັງຫລາຍ ເອີຍ ພວກເຮົາກໍເປັນໜີ້ຢູ່ ແຕ່ບໍ່ແມ່ນເປັນໜີ້ຝ່າຍ
ເນື້ອໜັງ ທີ່ຊິຕ້ອງໃຊ້ຊີວິດຕາມເນື້ອໜັງນັ້ນ
8:13 ຄື ຄັ່ນພວກເຈົ້າໃຊ້ຊີວິດຕາມເນື້ອໜັງນັ້ນ ເຈົ້າກໍຊິຕາຍໄປ ແຕ່ຄັ່ນເຈົ້າປະ-
ຫານຊີວິດຝ່າຍເນື້ອໜັງໂດຍທາງ ພຣະວິນຍານ ເຈົ້າກໍຊິມີຊີວິດຢູ່ໄດ້
8:14 ຄື ຜູ້ໜຶ່ງຜູ້ໃດທີ່ຢູ່ດ້ວຍການຊົງນຳຂອງ ພຣະວິນຍານ ຂອງພຣະເຈົ້າ ຜູ້ນັ້ນ
ເປັນລູກຂອງພຣະເຈົ້າ
8:15 ຄື ພວກເຈົ້າບໍ່ໄດ້ຮັບວິນຍານຂອງການເປັນຂ້າທາດ ຈັ່ງສູ່ຄວາມຕົກໃຈຢ້ານ
ອີກ ແຕ່ໄດ້ຮັບ ພຣະວິນຍານ ຜູ້ເພິ່ນໃຫ້ສິດເປັນລູກລ້ຽງ ຂອງພຣະເຈົ້າຊຶ່ງສາ-
ມາດເອີ້ນເພິ່ນວ່າ “ອີພໍ່ໆ ເອີຍ”
8:16 ແລ້ວ ພຣະວິນຍານ ນັ້ນເອງເປັນພະຍານກັນກັບຈິດວິນຍານຂອງພວກເຮົາ
ວ່າພວກເຮົາທັງຫລາຍໄດ້ເປັນລູກໆ ຂອງພຣະເຈົ້າແລ້ວ
8:17 ແລ້ວຄັ່ນໄດ້ເປັນລູກໆ ຂອງພຣະເຈົ້າ ໝາຍຄວາມວ່າເຮົາມີສ່ວນຮ່ວມໃນກຳ-
ມະສິດຂອງເພິ່ນ ຄືມີກຳມະສິດຮ່ວມກັນກັບ ພຣະຄຣິດ ແລ້ວຄັ່ນພວກເຮົາທົນ
ຄວາມທຸກລຳບາກນຳກັນກັບ ພຣະຄຣິດ ພວກເຮົາກໍຊິໄດ້ມີສ່ວນຮ່ວມໃນສະ-
ຫງ່າລາສີອັນຮຸ່ງເຮືອງຂອງເພິ່ນນຳ
8:18 ຄື ຂ້ອຍຖືວ່າ ຄວາມທຸກລຳບາກໃນປະຈຸບັນນີ້ ບໍ່ສາມາດທີ່ຊິປຽບທຽບກັບ
ສະຫງ່າລາສີອັນຮຸ່ງເຮືອງນັ້ນທີ່ຊິເປີດເຜີຍໃນພວກເຮົາໃນອະນາຄົດ
8:19 ດ້ວຍວ່າ ສິ່ງທຳຊາດທັງປວງທີ່ພຣະເຈົ້າໄດ້ສ້າງ ພວມຄອງຖ້າຈົນກວ່າລູກໆ
ຂອງພຣະເຈົ້າໄດ້ຮັບການເປີດເຜີຍ
8:20 ໂດຍວ່າ ສິ່ງທຳຊາດແນວທີ່ພຣະເຈົ້າໄດ້ສ້າງ ຕ້ອງເສື່ອມສະພາບເດີມສູ່ສະ-
ພາບອະນິຈັງຍ້ອນການສາບແຊ່ງ ບໍ່ແມ່ນດ້ວຍການສະໝັກ ແຕ່ເປັນໄປຕາມ
ພຣະປະສົງທີ່ພຣະເຈົ້າໄດ້ກຳນົດໄວ້ໃນການສາບແຊ່ງນັ້ນ ດ້ວຍຄວາມຫວັງດີ

8:21 ແລ້ວແນວທຳຊາດທີ່ພຣະເຈົ້າໄດ້ສ້າງ ເພິ່ນກໍຊິກອບກູ້ອອກຈາກການຕົກ
ເປັນຂ້າທາດຂອງສະພາບອະນິຈັງນັ້ນ ເຂົ້າສູ່ເສລີພາບຂອງລູກໆ ຂອງພຣະເຈົ້າ
ຊຶ່ງປະກອບດ້ວຍສະຫງ່າລາສີອັນຮຸ່ງເຮືອງ
8:22 ຄື ພວກເຮົາຮູ້ຢູ່ແລ້ວວ່າ ແນວທຳຊາດທີ່ພຣະເຈົ້າໄດ້ສ້າງນັ້ນ ພວມຊິຮ້ອງໄຫ້
ຮ່ວມກັນ ດ້ວຍຄວາມເຈັບປວດຄືແມ່ຊິອອກລູກຮອດຄູ່ມື້ນີ້
8:23 ບໍ່ແມ່ນແຕ່ສິ່ງທຳຊາດນັ້ນ ແຕ່ພວກຄົນເຮົາທັງຫລາຍນຳ ທີ່ໄດ້ຮັບ ພຣະວິນ-
ຍານ ເປັນຜົນແຮກ ແມ່ນແຕ່ພວກເຮົາເອງກໍຍັງຮ້ອງໄຫ້ຄອຍຖ້າຜົນສຳເລັດໃນ
ການຮັບສະພາບເປັນລູກລ້ຽງ ຂອງພຣະເຈົ້າ ຄືຄອຍຖ້າດ້ວຍຄວາມຕື່ນເຕັ້ນ
ການເຂົ້າສູ່ສະພາບອຳມະຕະນັ້ນ ບັດເພິ່ນຊິລົງມາຮັບເອົາພວກເຮົາໄວ້ໄປຢູ່ນຳ
ເພິ່ນນັ້ນ
8:24 ຄືວ່າ ພວກເຮົາໄດ້ລອດຍ້ອນຄວາມຫວັງອັນໝັ້ນຄົງ ແຕ່ຄວາມຫວັງໃນແນວ
ທີ່ເຮົາເບິ່ງເຫັນໄດ້ ກໍບໍ່ແມ່ນຄວາມຫວັງອີຫລີ ຄືໃຜແໜ່ຊິອາໄສຄວາມຫວັງໃນ
ແນວທີ່ເຂົາເບິ່ງເຫັນຕໍ່ໜ້າໄດ້ແລ້ວຊັ່ນ
8:25 ແຕ່ວ່າ ຄັ່ນພວກເຮົາຄອຍຖ້າດ້ວຍຄວາມ ຫວັງໃນແນວທີ່ຕາເຮົາຍັງບໍ່ທັນ
ເຫັນ ເຮົາຈັ່ງຊິຄອຍຖ້າດ້ວຍຄວາມໝັ່ນພຽນ
8:26 ໃນທຳນອງດຽວກັນ ພຣະວິນຍານ ຊ່ອຍພວກເຮົາໃນຄວາມອ່ອນແອ ຕອນ
ເຮົາບໍ່ຈັກວ່າຄວນຊິອະທິຖານແບບໃດ ຄື ພຣະວິນຍານ ເອງອ້ອນວອນແທນເຮົາ
ດ້ວຍການຮ້ອງໄຫ້ຊຶ່ງເຫລືອທີ່ຊິເວົ້າເປັນຄຳໄດ້
8:27 ແລ້ວພຣະເຈົ້າຜູ້ເພິ່ນທີ່ວິໄຈຫົວໃຈມະນຸດ ຢັ່ງຮູ້ຄວາມໝາຍຂອງ ພຣະວິນ-
ຍານ ຍ້ອນວ່າ ພຣະວິນຍານ ໄດ້ວອນຂໍເພື່ອຄົນຂອງພຣະເຈົ້າທັງຫລາຍ ຕາມ
ພຣະປະສົງອັນເປັນທີ່ຊອບຂອງພຣະເຈົ້າ
8:28 ແລ້ວເຮົາຮູ້ກັນວ່າ ພຣະເຈົ້າເພິ່ນໃຫ້ໝົດຄູ່ແນວປະສານກັນໃຫ້ເກີດຜົນອັນດີ
ໃນຄູ່ຢ່າງສຳລັບຜູ້ທີ່ຮັກເພິ່ນ ຄືໃຫ້ຜູ້ທີ່ເພິ່ນໄດ້ເອີ້ນໄດ້ເຊີນມານັ້ນ ຕາມພຣະປະ-
ສົງອັນດີງາມຂອງເພິ່ນ

8:29 ໂດຍວ່າ ຜູ້ໜຶ່ງຜູ້ໃດທີ່ເພິ່ນໄດ້ຮູ້ຈັກໄວ້ກ່ອນນັ້ນ  ເພິ່ນມີແຜນການອັນດີໄວ້
ໃຫ້ເຂົາປ່ຽນສະພາບໃໝ່ ໃຫ້ຕາມລັກສະນະພາບຄືກັນກັບ ພຣະບຸດ ຂອງເພິ່ນ
ເພື່ອ ພຣະບຸດ ນັ້ນຊິໄດ້ເປັນໃຫຍ່ເປັນບຸດຫົວປີຢູ່ນຳພວກພີ່ນ້ອງທັງຫລາຍ
8:30 ຫລາຍກວ່ານັ້ນອີກ ຜູ້ຄົນທັງຫລາຍທີ່ເພິ່ນໄດ້ຕັ້ງແຜນການໄວ້ໃຫ້ກ່ອນແລ້ວ
ນັ້ນ  ເພິ່ນກໍໄດ້ເອີ້ນໄດ້ເຊີນມານຳ ແລ້ວຜູ້ຄົນທີ່ເພິ່ນໄດ້ເອີ້ນໄດ້ເຊີນມາແລ້ວນັ້ນ
ເພິ່ນກໍໄດ້ໂຜດໃຫ້ເຂົາເປັນຜູ້ຊອບທຳອັນຖືກຕ້ອງ ແລ້ວຜູ້ທີ່ເພິ່ນໄດ້ກະລຸນາໃຫ້-
ເປັນຜູ້ຊອບທຳອັນຖືກຕ້ອງແລ້ວນັ້ນ ເພິ່ນກໍຍັງໂຜດໃຫ້ເຂົ້າມີຫຸ້ນສ່ວນໃນສະ-
ຫງ່າລາສີອັນຮຸ່ງເຮືອງຂອງເພິ່ນນຳ
8:31 ຄັ່ນເປັນຈັ່ງຊັ້ນແລ້ວ ເຮົາຊິວ່າຈັ່ງໃດດີ  ຄືຄັ່ນພຣະເຈົ້າຢູ່ຝ່າຍເຮົາແລ້ວ ແມ່ນ
ໃຜຊິຂັດຂວາງຕໍ່ຕ້ານສູ້ເຮົາໄດ້
8:32 ຄືພຣະເຈົ້າຜູ້ເພິ່ນທີ່ບໍ່ໄດ້ຫວງແຫນ ພຣະບຸດ ຂອງເພິ່ນໄວ້ ແຕ່ໄດ້ມອບໄວ້
ເພື່ອໃຫ້ຄົນເຮົາທັງຫລາຍແລ້ວ  ຄັ່ນເປັນຈັ່ງຊັ້ນ ພຣະເຈົ້າເພິ່ນຊິບໍ່ມອບສິ່ງສາ-
ລະພັດອື່ນໆ ໃຫ້ຄົນເຮົາທັງຫລາຍນຳກັນ ພ້ອມກັບ ພຣະບຸດ ຂອງເພິ່ນບໍ່ແມ່ນບໍ້
8:33 ບັດນີ້ ຄັ່ນເປັນຈັ່ງຊັ້ນແລ້ວ ແມ່ນໃຜແໜ່ຊິສາມາດຟ້ອງຮ້ອງໃສ່ພວກເຮົາໄດ້
ຜູ້ທີ່ພຣະເຈົ້າໄດ້ເລືອກຮັບຮອງໄວ້ແລ້ວນັ້ນ ຍ້ອນພຣະເຈົ້າເອງຖືວ່າເຮົາເປັນຄົນ
ຊອບທຳຖືກຕ້ອງແລ້ວ
8:34 ແມ່ນໃຜມີສິດຟ້ອງຮ້ອງຕັດສິນລົງໂທດໃສ່ໄດ້  ຄື ພຣະຄຣິດ ໄດ້ຕາຍເປັນ
ໂທດແທນຄົນເຮົາແລ້ວ ເອີ້ ຍິ່ງກວ່ານັ້ນອີກ ເພິ່ນໄດ້ເປັນຂຶ້ນມາຈາກຕາຍແລ້ວ
ດຳລົງຢູ່ເບື້ອງຂວາຂອງພຣະເຈົ້າ ເປັນຜູ້ໄກ່ເກ່ຍ ວອນຂໍຕໍ່ພຣະເຈົ້າເພື່ອຄົນເຮົາ
ທັງຫລາຍ
8:35 ຄັ່ນຈັ່ງຊັ້ນແລ້ວ ແມ່ນໃຜຊິສາມາດເຮັດໃຫ້ຄົນເຮົາທັງຫລາຍຖືກຕັດຂາດ
ຈາກຄວາມຮັກຂອງ ພຣະຄຣິດ ໃຫ້ໄດ້  ຊິເປັນຄວາມຍາກລຳບາກກໍດີ ຫລືຄວາມ
ທຸກກໍດີ ຫລືການຂົ່ມເຫງບຽດບຽນກໍດີ ຫລືການຂາດອາຫານການກິນກໍດີ ຫລື
ການຂາດເສື້ອຜ້າໜ້າແພກໍດີ ຫລືການຖືກອັນຕະລາຍໂພຍໄພກໍດີ ຫລືຄົມດາບ
ກໍດີ

8:36 ຕາມທີ່ຂຽນໄວ້ແລ້ວວ່າ “ຜູ້ຂ້າທັງຫລາຍຈັ່ງຖືກປະຫານເໝີດມື້ ນັບວ່າພວກ
ເຮົາເປັນຄືແກະທີ່ຊິນຳເອົາໄປຂ້າ”
8:37 ບໍ່ມີດອກ ໃນເຫດການທັງໝົດແນວໝູ່ນີ້ ພວກເຮົາມີໄຊຊະນະຍິ່ງກວ່າຜູ້ຊະ-
ນະໂດຍທາງ ພຣະເຢຊູຄຣິດ ຜູ້ເພິ່ນໄດ້ຮັກແພງພວກເຮົາທັງຫລາຍ
8:38 ຈັ່ງຊັ້ນ ຂ້ອຍມີຄວາມໝັ້ນໃຈວ່າ ແມ່ນແຕ່ຄວາມຕາຍກໍດີ ຫລືຊີວິດກໍດີ ຫລື
ເທວະທູດກໍດີ ຫລືສັກເທບຜູ້ມີບັນດາສັກກໍດີ ຫລືລິດເດດທັງຫລາຍກໍດີ ຫລືແນວ
ທີ່ມີຢູ່ໃນປະຈຸບັນຄູ່ມື້ນີ້ກໍດີ ຫລືແນວທີ່ຊິມາໃນອະນາຄົດກໍດີ
8:39 ຫລືທີ່ສູງກໍດີ ຫລືທີ່ເລິກກໍດີ ຫລືແນວອື່ນໆ ໃດໆ ທີ່ໄດ້ຖືກສ້າງແລ້ວກໍດີ ຄື
ແນວໝູ່ນີ້ຊິບໍ່ສາມາດເຮັດໃຫ້ພວກເຮົາທັງຫລາຍຖືກຕັດຂາດຈາກຄວາມຮັກຂອງ
ພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າຂອງເຮົາໄດ້

## ໂຣມ ບົດທີ 9

9:1 ຂ້ອຍກໍເວົ້າຕາມຄວາມເປັນຈິງໝົດໃນ ພຣະຄຣິດ ຂ້ອຍບໍ່ໄດ້ຕົວະ ຄືຈິດສຳ-
ນຶກຜິດຊອບຊົ່ວດີຂອງຂ້ອຍໄດ້ເປັນພະຍານນຳໂດຍທາງ ພຣະວິນຍານ ບໍລິສຸດ
9:2 ແລ້ວຂ້ອຍກໍມີຄວາມທຸກຄວາມໜັກໃຈຫລາຍ ຈັ່ງເສົ້າໃຈຢູ່ຕະຫລອດ
9:3 ຄື ຄັ່ນເປັນໄປໄດ້ ແມ່ນແຕ່ໃຈໂຕຂ້ອຍ ອາດ ປາດຖະໜາທີ່ຊິຖືກຕັດຂາດຈາກ
ພຣະຄຣິດ ເຂົ້າສູ່ການສາບແຊ່ງ ຍ້ອນເຫັນແກ່ພີ່ນ້ອງ ຊາວຢິວ ຂອງຂ້ອຍຕາມ
ເນື້ອໜັງ
9:4 ຄືຊົນຊາດ ອິສະຣາເອນ ນັ້ນ ຜູ້ທີ່ໄດ້ຮັບກຳມະສິດເປັນລູກໆ ຂອງພຣະເຈົ້າ ຢູ່-
ໃນສະຫງ່າລາສີອັນຮຸ່ງເຮືອງຂອງເພິ່ນ ມີກຳມະສິດໃນພິໄນກຳຈາກເພິ່ນ ໄດ້ຮັບ
ມອບກົດບັນຍັດ ມີໜ້າທີ່ໃນການຮັບໃຊ້ ກັບໄດ້ຮັບມອບຄຳໝັ້ນສັນຍາທັງຫລາຍ
ຂອງເພິ່ນນຳ
9:5 ຊຶ່ງເປັນພໍ່ຕະກູນທີ່ສືບທອດກັນມາຕາມເຊື້ອສາຍ ເປັນຊົນຊາດທີ່ ພຣະເຢຊູ-
ຄຣິດ ໄດ້ສະເດັດລົງມາເກີດ ຮັບສະພາບເປັນຄົນຕາມເນື້ອໜັງ ຜູ້ເພິ່ນທີ່ພຣະເຈົ້າ
ໄດ້ອວຍພອນໂດຍໄດ້ເຈີມໃຫ້ເປັນໃຫຍ່ ເປັນປະລະບຽງເໜືອສິ່ງສາລະພັດຕະ-
ຫລອດການເປັນນິດ ອາເມນ

9:6 ແຕ່ນີ້ບໍ່ໄດ້ໝາຍຄວາມວ່າ ພຣະຄຳ ຂອງພຣະເຈົ້າບໍ່ໄດ້ເກີດຜົນອີຫຍັງກັບເຂົາ
ດອກ ຕາມທີ່ຕົວລາຄານັ້ນ ຄືບໍ່ແມ່ນຄູ່ຄົນທີ່ເກີດມາໃນວົງຕະກູນ ອິສະຣາເອນ ໄດ້
ເປັນຄົນ ອິສະຣາເອນ ໂດຍແທ້ດອກ
9:7 ແລ້ວບໍ່ແມ່ນທີ່ວ່າ ຄູ່ຄົນທີ່ເປັນລູກຫລານຕາມເຊື້ອສາຍຂອງເຖົ້າ ອັບຣາຮາມ
ນັ້ນໄດ້ເປັນລູກຫລານແທ້ຂອງ ລາວ ແຕ່ຕາມທີ່ມີຄຳທຳນາຍໄວ້ວ່າ “ເຂົາຊິເອີ້ນ
ເຊື້ອສາຍຂອງເຈົ້ານັ້ນ ສະເພາະທາງສາຍຕະກູນຂອງ ອີຊາກ ”
9:8 ຄື ພວກເຂົາທີ່ເກີດເປັນຊາວ ອິສະຣາເອນ ຕາມເນື້ອໜັງກໍບໍ່ໄດ້ນັບວ່າເປັນ
ລູກໆ ຂອງພຣະເຈົ້າດອກ ແຕ່ວ່າລູກແຫ່ງຄຳໝັ້ນສັນຍານັ້ນ ເຂົາເອງຈັ່ງຊິນັບວ່າ
ເປັນເຊື້ອສາຍແທ້
9:9 ຍ້ອນວ່າ ນີ້ກໍເປັນຕາມຄຳໝັ້ນສັນຍາໃນ ພຣະຄຳ ຂອງພຣະເຈົ້າທີ່ວ່າ “ໃນ
ຍາມນີ້ເຮົາຊິມາອີກ ແລ້ວນາງ ຊາຣາ ຊິມີລູກຊາຍຕາມຄຳໝັ້ນສັນຍາແລ້ວນັ້ນ”
9:10 ແລ້ວບໍ່ແມ່ນແຕ່ນີ້ແນວດຽວ ຄື ຕໍ່ມາບັດນາງ ເຣເບກາ ໄດ້ຖືພາມີທ້ອງໂດຍ
ຊາຍຄົນໜຶ່ງ ແມ່ນ ອີຊາກ ປູ່ທວດຂອງພວກເຮົາ
9:11 (ແລ້ວວ່າ ກ່ອນເດັກນ້ອຍຝາແຝດນັ້ນໄດ້ເກີດມາ ເຂົາທັງສອງກໍຍັງບໍ່ທັນມີ
ໂອກາດໄດ້ເຮັດແນວດີຫລືແນວຊົ່ວ ນີ້ກໍເພື່ອມັນຊິເປັນໄປຕາມພຣະປະສົງໃນ
ແຜນການທີ່ພຣະເຈົ້າໄດ້ວາງໄວ້ນັ້ນ ຊິໄດ້ຢືນຢູ່ຢ່າງໝັ້ນຄົງ ບໍ່ແມ່ນເປັນໄປຕາມ
ແນວເຮັດແຕ່ປະການໃດເລີຍ ແຕ່ຕາມທີ່ເພິ່ນໄດ້ເອີ້ນໄດ້ກ່າວໄວ້ນັ້ນ)
9:12 ຄືພຣະເຈົ້າໄດ້ເວົ້າໄວ້ກັບນາງ ເຣເບກາ ວ່າ “ຜູ້ທີ່ເປັນອ້າຍນັ້ນຊິຮັບໃຊ້ຜູ້ເປັນ
ນ້ອງ”
9:13 ຕາມທີ່ຂຽນໄວ້ແລ້ວວ່າ “ສ່ວນ ຢາໂຄບ ນີ້ເຮົາໄດ້ຮັກ ແຕ່ ເອຊາວ ນັ້ນເຮົາກໍບໍ່
ມັກ”
9:14 ຄັ່ນຈັ່ງຊັ້ນແລ້ວ ເຮົາຊິວ່າຈັ່ງໃດດີ ພຣະເຈົ້າບໍ່ຍຸດຕິທຳຊັ້ນບໍ້ ບໍ່ແມ່ນແລ້ວ
ເປັນໄປບໍ່ໄດ້ເລີຍ
9:15 ຄືເພິ່ນໄດ້ເວົ້າກັບເຖົ້າ ໂມເຊ ວ່າ “ເຮົາຢາກຊິເມດຕາຜູ້ໃດ ເຮົາກໍຊິເມດຕາຜູ້-
ນັ້ນ ແລ້ວເຮົາຢາກຊິອີຕົນຜູ້ໃດ ເຮົາກໍຊິອີຕົນຜູ້ນັ້ນ”

9:16 ຄັນຈັ່ງຊັ້ນ ມັນບໍ່ໄດ້ຂຶ້ນຢູ່ກັບຄວາມປາດຖະໜາຂອງຜູ້ໃດ ຫລືການພະຍາ-
ຍາມຂອງເຂົາ ແຕ່ໄດ້ຂຶ້ນຢູ່ກັບພຣະເຈົ້າຜູ້ເພິ່ນທີ່ສະແດງ ພຣະ ເມດຕາກະລຸນາ
9:17 ຄື ພຣະຄໍາ ໄດ້ກ່າວກັບກະສັດ ຟາຣາໂອ ວ່າ "ຍ້ອນເຫດນີ້ເອງ ເຮົາໄດ້ຍົກ
ເຈົ້າຂຶ້ນມາໃນກໍລະນີນີ້ ກໍເພື່ອຊິສະແດງລິດທານຸພາບຂອງເຮົາໂດຍທາງເຈົ້າ
ກັບເພື່ອນາມຂອງເຮົາຊິຮັບການປະກາດອອກໄປຮອດທົ່ວໂລກ"
9:18 ຈັ່ງຊັ້ນ ພຣະເຈົ້າຊິສະແດງພຣະກະລຸນາຕໍ່ຜູ້ໃດກໍໄດ້ ແລ້ວຊິປ່ອຍໃຫ້ຜູ້ໃດມີ
ໃຈແຂງກະດ້າງກໍໄດ້
9:19 ແລ້ວເຈົ້າ ອາດ ຊິເວົ້ານໍາຂ້ອຍວ່າ "ຄັນເປັນຈັ່ງຊັ້ນແລ້ວ ເປັນຫຍັງທີ່ພຣະເຈົ້າ
ຈັ່ງຊິຕິຕຽນກ່າວໃສ່ຜູ້ລາງຄົນ ໂດຍວ່າໃຜຊິຂັດຂວາງພຣະປະສົງຂອງເພິ່ນໃຫ້
ໄດ້"
9:20 ໂອ ມະນຸດເອີຍ ຄຶດກ່ອນແມ່ະ ເຈົ້າຄືຜູ້ໃດຊັ່ນ ທີ່ຊິໂຕ້ຕອບກັບພຣະເຈົ້າ ຄື
ວ່າ ໄຫດິນທີ່ຖືກປັ້ນຂຶ້ນມານັ້ນ ຊິກັບມາຕໍ່ວ່າຊ່າງຜູ້ປັ້ນໄດ້ບໍ້ ວ່າ "ເປັນຫຍັງເຈົ້າຄື
ໄດ້ປັ້ນໃຫ້ຂ້ອຍເປັນແນວນີ້"
9:21 ຊ່າງປັ້ນໄຫດິນນັ້ນ ມີສິດເໜືອກ້ອນດິນທີ່ຊິປັ້ນແບບໃດກໍໄດ້ ຄືກ້ອນດິນ
ກ້ອນດຽວນັ້ນ ອາດ ຊິຖືກຊ່າງປັ້ນເປັນແນວທີ່ມີຄຸນຄ່າສູງເປັນພິເສດກໍໄດ້ ຫລື
ເປັນແນວທໍາມະດາທີ່ບໍ່ຄ່ອຍມີຄຸນຄ່າກໍໄດ້
9:22 ແລ້ວຄັນພຣະເຈົ້າປະສົງທີ່ຊິສະແດງຄວາມໂມໂຫ ກັບລິດທານຸພາບຂອງ
ເພິ່ນໃຫ້ຄົນຮູ້ຈັກ ທີ່ວ່າເພິ່ນໄດ້ອົດກັ້ນໄວ້ແສນໂດນແສນນານມາແລ້ວຕໍ່ຜູ້ຄົນ
ທັງຫລາຍທີ່ສະຫງວນໄວ້ສົມຄວນຊິພິນາດໄປ
9:23 ກໍເພື່ອວ່າ ເພິ່ນຊິສະແດງສະຫງ່າລາສີອັນຮຸ່ງເຮືອງຂອງເພິ່ນຕໍ່ຜູ້ຄົນທັງ-
ຫລາຍທີ່ສົມຄວນຮັບຄວາມເມດຕາກະລຸນາ ທີ່ເພິ່ນໄດ້ຈັດກຽມໄວ້ແຕ່ກ່ອນເພື່ອ
ເຂົາຊິເຂົ້າສູ່ສະຫງ່າລາສີອັນຮຸ່ງເຮືອງ
9:24 ແມ່ນພວກເຮົານີ້ເນາະ ຜູ້ທີ່ເພິ່ນໄດ້ເອີ້ນໄດ້ເຊີນມາແລ້ວນັ້ນ ແລ້ວເພິ່ນບໍ່ໄດ້
ເອີ້ນໄດ້ເຊີນອອກຈາກພວກຄົນ ຢິວ ພວກດຽວ ແຕ່ອອກຈາກພວກຕ່າງຊາດທັງ-
ຫລາຍນໍາ

9:25 ຄືກັນກັບທີ່ພຣະເຈົ້າໄດ້ກ່າວໄວ້ໃນໜັງສື ໂຮເຊອາ ວ່າ "ບັດນີ້ເຮົາຊິເອີ້ນຄົນ
ຕ່າງຊາດ ນັ້ນວ່າເປັນຊົນຊາດຂອງເຮົາ ຊຶ່ງແຕ່ກ່ອນບໍ່ແມ່ນຊົນຊາດຂອງເຮົາ ກັບ
ຊິເອີ້ນເຂົາວ່າເປັນທີ່ຮັກແພງຂອງເຮົາ ຊຶ່ງແຕ່ກ່ອນເຮົາບໍ່ໄດ້ຮັກແພງ
9:26 ແລ້ວມັນຊິເປັນໄປທີ່ວ່າ ໃນໜ້ອງໜຶ່ງທີ່ພຣະເຈົ້າເຄີຍບອກເຂົາວ່າ 'ພວກເຈົ້າ
ບໍ່ແມ່ນຊົນຊາດຂອງເຮົາ' ບັດນີ້ ໃນໜ້ອງນັ້ນເອງ ຊິເອີ້ນພວກເຂົາວ່າ ເປັນລູກໆ
ຂອງພຣະເຈົ້າຜູ້ດຳລົງຢູ່"
9:27 ແລ້ວ ເອຊາຢາ ຜູ້ເປັນປາກເປັນສຽງ ໄດ້ປະກາດເລື່ອງຊົນຊາດ ອິສະຣາ-
ເອນ ອີກວ່າ "ແມ່ນແຕ່ຈຳນວນຊົນຊາດ ອິສະຣາເອນ ນັ້ນມີຫລາຍຄືເມັດຊາຍ
ຕາມທະເລ ແຕ່ໃນທີ່ສຸດມີແຕ່ສ່ວນນ້ອຍທີ່ເຫລືອຢູ່ຫັ້ນ ຊິໄດ້ຮັບຄວາມລອດພົ້ນ
9:28 ດ້ວຍວ່າພຣະເຈົ້າຊິເຮັດໃຫ້ການນັ້ນໃຫ້ສຳເລັດ ແລ້ວກໍຊິໃຫ້ມັນຈົບລົງດ້ວຍ
ຄວາມຊອບທຳໃນໄວໆ ນີ້ເອງ ຍ້ອນວ່າເພິ່ນຜູ້ເປັນນາຍຊີວິດຊິໃຫ້ການນັ້ນສຳ-
ເລັດໃນເວລາໄວໆ ນີ້ ເທິງແຜ່ນດິນໂລກ"
9:29 ແລ້ວຕາມທີ່ ເອຊາຢາ ເຄີຍໄດ້ກ່າວໄວ້ກ່ອນອີກວ່າ "ຄັ່ນພຣະເຈົ້າ ຜູ້ບັນຊາ
ການຈອມໂຍທາສູງສຸດ ບໍ່ໄດ້ຍົກເວັ້ນໃຫ້ມີເຊື້ອສາຍເຫລືອໄວ້ແດ່ ຊົນຊາດຂອງ
ເຮົານັ້ນກໍຊິດັບສູນໄປຄັກ ຄືກັນກັບເມືອງ ໂສໂດມ ກັບເມືອງ ໂກໂມຣາ ນັ້ນ"
9:30 ຄັ່ນເປັນຈັ່ງຊັ້ນແລ້ວ ເຮົາຊິວ່າຈັ່ງໃດດີ ຄືພວກຄົນຕ່າງຊາດທີ່ບໍ່ໄດ້ຊອກຫາ
ທາງຊອບທຳຂອງພຣະເຈົ້ານັ້ນ ເຂົາກໍໄດ້ເປັນຄົນຊອບທຳແລ້ວ ຕາມທາງຊອບ-
ທຳທີ່ໄດ້ໂດຍຄວາມເຊື່ອ
9:31 ແຕ່ສຳລັບພວກຊົນຊາດ ອິສະຣາເອນ ຊຶ່ງຊອກຫາຄວາມຊອບທຳໂດຍທາງ
ກົດບັນຍັດ ພວກເຂົາກໍຍັງບໍ່ໄດ້ບັນລຸເຖິງຄວາມຊອບທຳໂດຍທາງກົດບັນຍັດນັ້ນ
ເລີຍ
9:32 ເປັນຍ້ອນອີຫຍັງ ກໍເປັນຍ້ອນພວກເຂົາບໍ່ໄດ້ຊອກຫາໂດຍທາງຄວາມເຊື່ອ
ແຕ່ໄດ້ຊອກຫາໂດຍທາງການປະພຶດຕາມກົດບັນຍັດຊື່ໆ ເຂົາຈັ່ງຊິສະດຸດກ້ອນ-
ຫີນໃຫຍ່ນັ້ນເອງ

9:33 ຕາມທີ່ມີຄຳຂຽນໄວ້ແລ້ວວ່າ “ນີ້ແຫລະ ເຮົາໄດ້ວາງຫີນກ້ອນໃຫຍ່ກ້ອນໜຶ່ງ
ໄວ້ທີ່ພູເຂົາ ຊີໂອນ ໃນເມືອງ ເຢຣູຊາເລັມ ນັ້ນ ແນວທີ່ຊິເຮັດໃຫ້ເຂົາສະດຸດຊຸ່ນ-
ເຄືອງໃຈ ແຕ່ຜູ້ໃດທີ່ເຊື່ອໃນເພິ່ນຜູ້ນັ້ນກໍຊິບໍ່ໄດ້ຖືກການອັບອາຍຂາຍໜ້າເລີຍ”

# ໂຣມ ບົດທີ 10

10:1 ພີ່ນ້ອງທັງຫລາຍ ເອີຍ ໃຈຂ້ອຍປາດຖະໜາແຮງ ຈັ່ງອະທິຖານວອນຂໍຕໍ່
ພຣະເຈົ້າເພື່ອຊົນຊາດ ອິສະຣາເອນ ນັ້ນ ຄື ຢາກໃຫ້ເຂົາລອດພົ້ນ
10:2 ຂ້ອຍເປັນພະຍານໃຫ້ເຂົາໄດ້ວ່າ ພວກເຂົາມີໃຈຮ້ອນຮົນທີ່ຊິຮັບໃຊ້ພຣະເຈົ້າ
ແຕ່ບໍ່ແມ່ນຕາມຖານຄວາມອ້ອມຮູ້
10:3 ຄື ເຂົາບໍ່ຮູ້ຈັກທາງຄວາມຊອບທຳຂອງພຣະເຈົ້າ ແຕ່ພະຍາຍາມສ້າງທາງ
ຄວາມຊອບທຳຂອງໂຕເອງຂຶ້ນແທນ ແລ້ວບໍ່ຍອມຫັນມາສູ່ທາງຄວາມຊອບທຳ
ຂອງພຣະເຈົ້າ
10:4 ໂດຍວ່າ ພຣະຄຣິດ ເປັນທີ່ຈົບລົງຂອງທາງຄວາມຊອບທຳຕາມກົດບັນຍັດ
ສຳລັບຄູ່ຄົນທີ່ຮັບເຊື່ອ
10:5 ຄື ໂມເຊ ໄດ້ອະທິບາຍເຖິງເລື່ອງການເປັນຄົນຊອບທຳຕາມກົດບັນຍັດນັ້ນວ່າ
“ຜູ້ຄົນໃດທີ່ຊອກປະຕິບັດຕາມຂໍ້ກົດບັນຍັດນັ້ນ ກໍຕ້ອງມີຊີວິດຢູ່ໄດ້ໂດຍທາງຂໍ້
ປະຕິບັດນັ້ນເອງ”
10:6 ແຕ່ການເປັນຄົນຊອບທຳໂດຍທາງຄວາມເຊື່ອໄດ້ເປັນຈັ່ງຊີ້ ຄື “ຢ່ານຶກໃນໃຈ
ວ່າ ໃຜຊິຂຶ້ນໄປສູ່ສະຫວັນໄດ້” (ໝາຍຄວາມວ່າ ຂຶ້ນໄປເຊີນ ພຣະຄຣິດ ລົງມາ)
10:7 ຫລື “ໃຜຊິລົງໄປໃນເຫວອັນເລິກ” (ໝາຍຄວາມວ່າ ລົງໄປແດນມໍລະນາເຊີນ
ພຣະຄຣິດ ຂຶ້ນມາຈາກຕາຍອີກ)
10:8 ແຕ່ທາງນັ້ນວ່າຈັ່ງໃດຊັ່ນ ກໍວ່າ “ຖ້ອຍຄຳນັ້ນຢູ່ໃກ້ເຈົ້າຢູ່ແລ້ວ ແມ່ນແຕ່ຢູ່ໃນ
ປາກກັບຢູ່ໃນໃຈຂອງເຈົ້າເອງ” (ຄືຖ້ອຍຄຳເລື່ອງຄວາມເຊື່ອທີ່ພວກເຮົາປ່າວ
ປະກາດນັ້ນ)
10:9 ໂດຍວ່າ ຄັນເຈົ້າຊິຮັບດ້ວຍປາກວ່າ ພຣະເຢຊູຄຣິດ ເປັນພຣະຜູ້ເປັນເຈົ້າ ກັບ
ເຊື່ອໃນໃຈວ່າພຣະເຈົ້າໄດ້ບັນດົນໃຫ້ເພິ່ນເປັນຂຶ້ນມາຈາກຕາຍແລ້ວ ເຈົ້າຊິໄດ້
ລອດພົ້ນ

10:10 ດ້ວຍວ່າ ການທີ່ເຊື່ອດ້ວຍໃຈໄດ້ນຳໄປສູ່ຄວາມຊອບທຳ ກັບການຍອມຮັບ
ດ້ວຍປາກກໍເປັນການປະກາດເຖິງຄວາມພົ້ນ
10:11 ຄື ພຣະຄຳ ບອກວ່າ "ຜູ້ໃດກໍຕາມ ທີ່ເຊື່ອວາງໃຈໃນເພິ່ນ ຜູ້ນັ້ນຊິບໍ່ໄດ້ອັບ-
ອາຍຂາຍໜ້າເລີຍ"
10:12 ຍ້ອນວ່າ ຊາວຢິວ ກັບຊາວເກຣັກກໍບໍ່ຕ່າງກັນດອກ ຄືພຣະເຈົ້າກໍເປັນພຣະ-
ເຈົ້າເໜືອຄົນທັງປວງຢູ່ແລ້ວ ຈັ່ງໂຜດຊ່ອຍຄູ່ຄົນທີ່ເອີ້ນຫາເພິ່ນ
10:13 ດ້ວຍວ່າ "ຜູ້ໃດກໍຕາມທີ່ຊິຮ້ອງອອກພຣະນາມຂອງເພິ່ນນັ້ນຊິໄດ້ລອດ"
10:14 ແລ້ວເຂົາຊິອ້ອນວອນອອກພຣະນາມຂອງເພິ່ນໄດ້ຈັ່ງໃດຄັ່ນເຂົາຍັງບໍ່ທັນໄດ້
ເຊື່ອ ແລ້ວເຂົາຊິເຊື່ອໃນພຣະນາມຂອງເພິ່ນໄດ້ຈັ່ງໃດ ຄັ່ນເຂົາຍັງບໍ່ທັນໄດ້ຍິນ
ເຖິງ ແລ້ວເຂົາຊິໄດ້ຍິນເຖິງໃນພຣະນາມຂອງເພິ່ນໄດ້ແນວໃດນອກຈາກວ່າມີຜູ້
ໄປປະກາດສູ່ຟັງ
10:15 ແລ້ວຄັ່ນບໍ່ມີໃຜຊ່ອຍສົ່ງຜູ້ນັ້ນໄປ ເຂົາຊິໄປປະກາດໄດ້ຈັ່ງໃດ ຕາມທີ່ມີຄຳ
ຂຽນໄວ້ແລ້ວວ່າ "ຕີນຂອງຄົນທັງຫລາຍນັ້ນງາມສ່ຳໃດ ຜູ້ທີ່ອອກໄປປະກາດຂ່າວ
ປະເສີດທາງສັນຕິພາບ ຊຶ່ງເປັນຂ່າວເຖິງສິ່ງດີເລີດ"
10:16 ແຕ່ວ່າ ບໍ່ແມ່ນຄູ່ຄົນທີ່ໄດ້ເຊື່ອຟັງຂ່າວປະເສີດນັ້ນ ຕາມທີ່ ເອຊາຢາ ໄດ້ກ່າວ
ໄວ້ວ່າ "ໂອ ພຣະເຈົ້າຂອງຜູ້ຂ້າ ເອີຍ ມີໃຜແໜ່ທີ່ໄດ້ຮັບເຊື່ອໃນເລື່ອງທີ່ເຮົານຳ
ໄປເວົ້າໃຫ້ຟັງ"
10:17 ຈັ່ງຊັ້ນ ຄວາມເຊື່ອນັ້ນໄດ້ເປັນຜົນຮັບຈາກການໄດ້ຍິນ ຄືການໄດ້ຍິນ ພຣະ-
ຄຳ ຂອງພຣະເຈົ້າ
10:18 ແຕ່ຂ້ອຍຖາມວ່າ "ເຂົາທັງຫລາຍບໍ່ທັນໄດ້ຍິນບໍ້" ເອີ້ ເຂົາໄດ້ຍິນແລ້ວອີຫລີ
ຄື "ສຽງຂອງສິ່ງທຳຊາດທີ່ພຣະເຈົ້າໄດ້ສ້າງນັ້ນ ໄດ້ກະຈາຍອອກໄປຮອດທົ່ວ
ແຜ່ນດິນໂລກແລ້ວ ຄືຖ້ອຍຄຳນັ້ນໄດ້ປ່າວປະກາດອອກໄປເຖິງສຸດປາຍແຜ່ນ-
ດິນໂລກ"
10:19 ແລ້ວຂ້ອຍຂໍຖາມອີກວ່າ "ຊົນຊາດ ອິສະຣາເອນ ບໍ່ຮູ້ບໍ່ເຂົ້າໃຈບໍ້" ແຕ່ທຳອິດ
ນັ້ນເຖົ້າ ໂມເຊ ໄດ້ກ່າວໄວ້ໃນໜັງສື ປະຖົມມະການ ວ່າ "ເຮົາຊິຍົວະພວກເຈົ້າໃຫ້

ອິດສາໂດຍໃຊ້ຄົນຕ່າງຊາດ ກັບຊິຍົວະໃຫ້ເຈົ້າເກີດຢາກຮ້າຍໂດຍໃຊ້ຊົນຊາດທີ່
ບໍ່ຊໍານານສະຫລາດ”
10:20 ແຕ່ ເອຊາຢາ ກໍໄດ້ເວົ້າອີກດ້ວຍຄວາມກ້າຫານວ່າ “ພວກຊົນຊາດທີ່ບໍ່ໄດ້
ຊອກຫາເຮົາ ກໍໄດ້ຮັບເຮົາ ແລ້ວພວກຊົນຊາດທີ່ບໍ່ໄດ້ຖາມຫາເຮົາໆ ກໍໄດ້ເປີດ-
ເຜີຍໃຫ້ເຂົາແລ້ວ”
10:21 ແຕ່ ເອຊາຢາ ໄດ້ກ່າວເຖິງພວກຊົນຊາດ ອິສະຣາເອນ ວ່າ “ເຮົາເຄີຍຢື່ນມື
ຂອງເຮົາອອກໄປຍັງພວກເຈົ້າຢູ່ໝົດມື້ໝົດເວັນ ຄືຕໍ່ຊົນຊາດທີ່ບໍ່ເຊື່ອຟັງ ກັບດື້-
ດ້ານໂຕ້ຖຽງຢູ່ຕະຫລອດ”

## ໂຣມ ບົດທີ 11

11:1 ບັດເປັນຈັ່ງຊັ້ນແລ້ວ ຂ້ອຍຖາມວ່າ ພຣະເຈົ້າໄດ້ຖິ້ມຊົນຊາດຂອງເພິ່ນແລ້ວບໍ້
ກໍບໍ່ແມ່ນແລ້ວ ເປັນໄປບໍ່ໄດ້ເລີຍ ຂ້ອຍເອງກໍເປັນຊົນຊາດ ອິສະຣາເອນ ເປັນ
ເຊື້ອສາຍຂອງເຖົ້າ ອັບຣາຮາມ ເກີດໃນເຜົ່າຕະກູນຂອງ ເບັນຢາມິນ
11:2 ຄືພຣະເຈົ້າບໍ່ໄດ້ຖິ້ມຄົນຂອງເພິ່ນດອກ ຜູ້ທີ່ເພິ່ນໄດ້ຮູ້ຈັກໄວ້ລ່ວງໜ້າແລ້ວ
ພວກເຈົ້າບໍ່ຮູ້ຈັກບໍ້ ທີ່ ພຣະຄໍາ ໄດ້ເວົ້າເຖິງເລື່ອງ ເອລີຢາ ທີ່ ລາວ ໄດ້ກ່າວຫາ
ພວກອິດສະຣາເອັນຕໍ່ພຣະເຈົ້າ ເວົ້າວ່າ
11:3 “ໂອພຣະເຈົ້າຂອງຜູ້ຂ້າ ເອີຍ ພວກເຂົາໄດ້ຂ້າພວກຜູ້ເປັນປາກເປັນສຽງຂອງ
ທ່ານຜູ້ຂ້າ ກັບໄດ້ມ້າງແທ່ນ ບູຊາຂອງທ່ານຜູ້ຂ້າລົງ ມີແຕ່ຜູ້ຂ້າຜູ້ດຽວທີ່ເຫລືອຢູ່
ແລ້ວດີບໍ່ດີພວກເຂົາຊອກຊິຂ້າຜູ້ຂ້ານໍາ”
11:4 ແລ້ວພຣະເຈົ້າໄດ້ຕອບ ລາວ ວ່າຈັ່ງໃດ ເພິ່ນຕອບວ່າ “ເຮົາມີເຈັດພັນຄົນທີ່ຍັງ
ຢູ່ຝ່າຍເຮົາ ເປັນຄົນທີ່ບໍ່ໄດ້ຍອມຄຸກເຂົ່າລົງຂາບຮູບຂອງ ພະບາອານ ນັ້ນເລີຍ”
11:5 ຈັ່ງໃດກໍຕາມ ແມ່ນແຕ່ບັດນີ້ກໍຍັງມີພວກອິດສະຣາເອັນທີ່ເຫລືອຢູ່ ທີ່ພຣະເຈົ້າ
ໄດ້ເລືອກໄວ້ໂດຍພຣະຄຸນ
11:6 ແລ້ວຄັ່ນໄດ້ຂຶ້ນຢູ່ກັບພຣະຄຸນ ໝາຍຄວາມວ່າ ມັນບໍ່ໄດ້ຂຶ້ນຢູ່ກັບການປະຕິ-
ບັດ ແລ້ວຄັ່ນໄດ້ຂຶ້ນຢູ່ກັບການປະຕິບັດນັ້ນ ມັນກໍບໍ່ໄດ້ເປັນພຣະຄຸນອີກຕໍ່ໄປ
ແລ້ວການປະຕິບັດບໍ່ໄດ້ເປັນການປະຕິບັດອີກຕໍ່ໄປຄືກັນ

11:7 ຄັນບໍ່ຊັ້ນແລ້ວ ມັນຊິເປັນຈັ່ງໃດ ພວກອິດສະຣາເອັນບໍ່ໄດ້ຮັບໄດ້ຮັບແນວທີ່
ເຂົາປາດຖະໜານັ້ນ ແຕ່ວ່າຄົນທີ່ພຣະເຈົ້າໄດ້ເລືອກໄວ້ຕາມພຣະປະສົງເພິ່ນນັ້ນ
ພວກເຂົາໄດ້ຮັບໄດ້ຮັບແລ້ວ ແລ້ວຝ່າຍຄົນອື່ນໆນັ້ນ ຕາໃຈເຂົາກໍບອດແຂງກະ-
ດ້າງໄປ
11:8 ຕາມທີ່ມີຄຳຂຽນໄວ້ແລ້ວວ່າ "ພຣະເຈົ້າກໍປ່ອຍພວກເຂົາໄວ້ຢູ່ໃນສະພາບມືໃຈ
ທີ່ງ້ວງເຫງົາໄປ ຄືມີຕາທີ່ມອງບໍ່ເຫັນ ກັບມີຫູທີ່ຟັງບໍ່ໄດ້ຍິນ ຈົນຮອດຄູ່ມື້ນີ້"
11:9 ແລ້ວກະສັດ ດາວິດ ກໍຍັງເວົ້າວ່າ "ຂໍໃຫ້ໂຕະອາຫານຂອງເຂົາ ກາຍເປັນ
ບ້ວງແຮ້ວ ເປັນກັບດັກ ກັບເປັນທີ່ສະດຸດຂອງເຂົາ ຢ່າງສົມນ້ຳໜ້າເຂົາ
11:10 ແລ້ວຂໍໃຫ້ຕາໃຈຂອງເຂົາມືດໄປ ເພື່ອເຂົາຊິມອງບໍ່ເຫັນ ກັບໃຫ້ສັນຫລັງ
ຂອງເຂົາງໍ່ຄ່ອມຕະຫລອດໄປ"
11:11 ບັດນີ້ຂ້ອຍຈັ່ງຖາມອີກວ່າ ພວກອິດສະຣາເອັນນັ້ນໄດ້ສະດຸດເຖິງລົ້ມລົງໄປ
ເລີຍຊັ່ນບໍ້ ກໍບໍ່ແມ່ນແລ້ວ ເປັນໄປບໍ່ໄດ້ເລີຍ ແຕ່ການທີ່ເຂົາລະເມີດນັ້ນເປັນເຫດ
ໃຫ້ຄວາມພົ້ນແຜ່ມາສູ່ພວກຕ່າງຊາດ ເພື່ອຊິຍົວະໃຈຂອງພວກອິດສະຣາເອັນໃຫ້
ເກີດມີການອິດສາ
11:12 ບັດນີ້ ຄັ່ນການຫລົງລະເມີດໄປຂອງພວກອິດສະຣາເອັນເປັນເຫດໃຫ້ພຣະ-
ເຈົ້າຫັນໄປໃຫ້ຊາວໂລກຮັບພົນເປັນສຸກຢ່າງບໍລິບູນແລ້ວ ຄືຍ້ອນການຜິດພາດ
ຂອງພວກອິດສະຣາເອັນໄດ້ເປັນເຫດໃຫ້ເພິ່ນຫຸ້ມເທແນວດີງາມຢ່າງເຕັມປ່ຽມໃຫ້
ຄົນຕ່າງຊາດນັ້ນ ກໍຊິແຮງດີຫລາຍສ່ຳໃດຄັ່ນຊາວ ອິສະຣາເອນ ໄດ້ກັບມາຮ່ວມ
ກັນກັບເຂົາ
11:13 ຄືທີ່ຂ້ອຍພວມຊິເວົ້ານຳພວກເຈົ້າຜູ້ເປັນຄົນຕ່າງຊາດແນວນີ້ ຂ້ອຍເວົ້າໃນ
ຖານະເປັນທູດພິເສດທີ່ໄດ້ຮັບການໃຊ້ໄປຍັງຄົນຕ່າງຊາດ ແລ້ວຂ້ອຍຈັ່ງຂອບໃຈ
ສັນລະເສີນພຣະເຈົ້າເພື່ອຕຳແໜ່ງໜ້າທີ່ຊຶ່ງເພິ່ນໃຫ້ໄວ້ກັບຂ້ອຍ
11:14 ເພື່ອວ່າ ຄັ່ນເປັນໄປໄດ້ ຂ້ອຍຢາກກະຕຸ້ນໃຈພວກຄົນຊົນຊາດຂອງຂ້ອຍ
ຕາມເນື້ອໜັງໃຫ້ຕື່ນ ໃຫ້ເຂົາຫັນມາອິດສາຄົນຕ່າງຊາດ ເພື່ອຜູ້ລາງຄົນ ອາດ ຊິ
ໄດ້ຮັບການລອດພົ້ນນຳ

11:15 ຄື ຄັນການທີ່ພີ່ນ້ອງຮ່ວມຊາດຂອງຂ້ອຍໄດ້ຖືກພຣະເຈົ້າທອດຖິ້ມເພື່ອໃຫ້
ຄົນທັງໂລກກັບຄືນດີກັນກັບເພິ່ນ ການທີ່ເພິ່ນຊິຮັບເອົາເຂົາຄືນມາອີກນັ້ນຊິເປັນ
ຈັ່ງໃດ ກໍຊິສໍ່າວ່າເຂົາກັບມີຊີວິດຄືນມາຈາກຕາຍ
11:16 ຄືວ່າ ຄັນແປ້ງເຂົ້າຈີ່ກ້ອນທໍາອິດນັ້ນບໍລິສຸດ ກ້ອນຕໍ່ໄປທັງໝົດກໍຊິບໍລິສຸດນໍາ
ແລ້ວຄັນຮາກຂອງກົກໄມ້ບໍລິສຸດ ງ່າຂອງມັນຊິບໍລິສຸດນໍາ
11:17 ແລ້ວຄັນງ່າໝາກກອກເດີມລາງງ່າຖືກຫັກອອກ ແລ້ວພວກເຈົ້າທີ່ປຽບຄືງ່າ
ໝາກກອກປ່າຖືກເພິ່ນເອົາມາພອກຕໍ່ໄວ້ແທນງ່າເດີມທີ່ຖືກຫັກອອກໄປຫັ້ນ ເພື່ອ
ໃຫ້ພວກເຈົ້າໄດ້ຮັບນໍ້າລ້ຽງຈາກຮາກໝາກກອກເທດເດີມນັ້ນ
11:18 ພວກເຈົ້າບໍ່ຄວນຊິອວດດີຕໍ່ງ່າເດີມນັ້ນເດີ້ ແຕ່ຄັນພວກເຈົ້າຄຶດຊິອວດດີ ກໍ
ໃຫ້ຈື່ໄວ້ວ່າ ພວກເຈົ້າໄດ້ອາໄສຮາກເດີມນັ້ນ ບໍ່ແມ່ນຮາກເດີມນັ້ນອາໄສພວກເຈົ້າ
11:19 ພວກເຈົ້າ ອາດ ຊິໂຕ້ຕອບວ່າ “ງ່າໝູ່ນັ້ນໄດ້ຖືກຫັກອອກແລ້ວ ເພື່ອຊິຕໍ່ງ່າ
ພວກເຮົາໄວ້”
11:20 ກໍແມ່ນຄວາມແລ້ວ ງ່າພວກນັ້ນຖືກຫັກອອກກໍຍ້ອນການບໍ່ເຊື່ອຂອງເຂົາ
ແລ້ວພວກເຈົ້າຢືນຢູ່ໄດ້ຍ້ອນຄວາມເຊື່ອ ຈັ່ງຊັ້ນຢ່າສູ່ຈອງຫອງເລີຍ ແຕ່ໃຫ້ເຄົາ-
ລົບໄວ້ເດີ້
11:21 ຄື ຄັນພຣະເຈົ້າບໍ່ໄດ້ເອົາງ່າເດີມນັ້ນໄວ້ ຫາລາງເທື່ອເພິ່ນ ອາດ ຊິບໍ່ເອົາພວກ
ເຈົ້າໄວ້ຄືກັນ
11:22 ຈັ່ງຊັ້ນ ນີ້ແຫລະ ໃຫ້ພິຈາລະນາພຣະຄຸນກັບຄວາມເຂັ້ມງວດຂອງພຣະເຈົ້າ
ເບິ່ງ ເຖິງຄົນພວກນັ້ນທີ່ຫລົງຜິດເພິ່ນກໍເຂັ້ມງວດ ແຕ່ສໍາລັບພວກເຈົ້າເພິ່ນກໍສະ-
ແດງຄວາມປານີຂອງເພິ່ນ ຄັນວ່າພວກເຈົ້າຍັງດໍາລົງຢູ່ໃນຄວາມປານີອັນດີງາມ
ຂອງເພິ່ນນັ້ນ ບໍ່ຊັ້ນພວກເຈົ້າ ອາດ ຊິຖືກຕັດອອກຄືກັນກັບພວກເຂົາກໍໄດ້ຄືກັນ
11:23 ແລ້ວສ່ວນພວກເຂົານັ້ນ ຄັນວ່າຕໍ່ໄປເຂົາຍົກເລີກການຢູ່ໃນທາງບໍ່ເຊື່ອຂອງ
ເຂົາ ເຂົາກໍຊິຮັບການຕໍ່ເຂົ້າໄປໃໝ່ຄືເກົ່າ ຍ້ອນວ່າພຣະເຈົ້າຍັງສາມາດພອກຕໍ່
ພວກເຂົາເຂົ້າອີກກໍໄດ້
11:24 ຄື ຄັນພຣະເຈົ້າໄດ້ຕັດພວກເຈົ້າອອກຈາກຕົ້ນໝາກກອກປ່າ ແນວເປັນປະ-
ເພດເກີດຕາມປ່າດົງຕາມທໍາຊາດ ແລ້ວໄດ້ພອກຕໍ່ໄວ້ຢ່າງຜິດທໍາຊາດຂອງມັນ

ກັບຕົ້ນໝາກກອກເທດພັນດີ ຫລາຍກວ່ານັ້ນອີກ ເພິ່ນຊິສາມາດເອົາງ່າເດີມທີ່
ຕັດອອກນັ້ນ ເອົາມາພອກຕໍ່ໃສ່ຕົ້ນໝາກກອກເທດເດີມຂອງມັນອີກກໍໄດ້
11:25 ຈັ່ງຊັ້ນ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍບໍ່ຢາກໃຫ້ພວກເຈົ້າໂງ່ບ້າເບົາປັນຍາ
ຫລາຍໃນຂໍ້ຄວາມອັນເລິກລັບນີ້ ຢ້ານວ່າເຈົ້າ ອາດ ຊິອວດຮູ້ອວດດີໃນຖານະໂຕ
ເອງ ຄືຝ່າຍພວກອິດສະຣາເອັນນັ້ນ ຕາເຂົາບອດຍ້ອນໃຈແຂງກະດ້າງ ຈັ່ງຮອດ
ຍາມທີ່ພວກຄົນຕ່າງຊາດໄດ້ເຂົ້າມາຄົບຈຳນວນ
11:26 ແລ້ວໃນຍາມນັ້ນ ພວກຊົນຊາດ ອິສະຣາເອນ ທັງປວງທີ່ຍັງຢູ່ກໍຊິໄດ້ຮັບເອົາ
ຄວາມລອດພົ້ນໝົດຄູ່ຄົນເລີຍ ຕາມທີ່ມີ ພຣະຄຳ ຂຽນໄວ້ແລ້ວວ່າ “ພຣະຜູ້ໂຜດຊິ
ສະເດັດອອກມາຈາກເມືອງ ຊີໂອນ ແລ້ວເພິ່ນຊິປາບແນວບໍ່ເປັນທຳໝົດອອກ-
ຈາກ ຢາໂຄບ ໄປ (ຄື ອິສະຣາເອນ )
11:27 ຄືຄຳໝັ້ນສັນຍາຂອງເຮົາທີ່ໃຫ້ພວກເຂົາກໍເປັນຈັ່ງຊັ້ນ ບັດຍາມເຮົາຊິມາຍົກ
ໂທດບາບອອກຈາກເຂົາໄປ”
11:28 ແລ້ວເຖິງເລື່ອງຂ່າວປະເສີດນັ້ນ ພວກເຂົາເປັນຝ່າຍປະຕິປັກໄວ້ກ່ອນ ເພື່ອ
ເຫັນແກ່ພວກເຈົ້າ ແຕ່ວ່າຕາມທີ່ພຣະເຈົ້າເລືອກໄວ້ມາກ່ອນນັ້ນຕາມພຣະປະສົງ
ຂອງເພິ່ນ ຊົນຊາດ ອິສະຣາເອນ ເປັນທີ່ຮັກແພງ ຍ້ອນເຫັນແກ່ພວກພໍ່ຕະກູນ
ຂອງຊາດເຂົາ
11:29 ຍ້ອນວ່າພຣະເຈົ້າບໍ່ໄດ້ປ່ຽນໃຈຈັກເທື່ອເລີຍ ໃນຂອງຂວັນທີ່ເພິ່ນໄດ້ມອບໄວ້
ໃຫ້ ພ້ອມທັງການເອີ້ນການເຊີນຂອງເພິ່ນນຳ
11:30 ຄືແຕ່ກ່ອນນັ້ນ ພວກເຈົ້າບໍ່ໄດ້ເຊື່ອຟັງພຣະເຈົ້າ ແຕ່ບັດນີ້ໄດ້ຮັບມອບຄວາມ
ເມດຕາຈາກເພິ່ນແລ້ວ ໄດ້ຍ້ອນຄວາມບໍ່ຍອມເຊື່ອຟັງຂອງຊາວ ອິສະຣາເອນ
11:31 ແລ້ວໃນທຳນອງດຽວກັນ ແມ່ນແຕ່ໃນບັດນີ້ຊາວ ອິສະຣາເອນ ຍັງບໍ່ຍອມ
ເຊື່ອຟັງ ພວກເຂົາຍັງມີໂອກາດຮັບຄວາມເມດຕາໄດ້ຄືກັນໂດຍເຫັນພວກເຈົ້າຮັບ
ຄວາມເມດຕາເປັນໂຕຢ່າງ
11:32 ຄື ພຣະເຈົ້າຖືວ່າ ໝົດຄູ່ຄົນຢູ່ໃນສະພາບຄວາມບໍ່ເຊື່ອຟັງ ນີ້ກໍເພື່ອເພິ່ນຊິໄດ້
ສະແດງຄວາມເມດຕາຂອງເພິ່ນໃຫ້ຄົນທັງປວງ

11:33 ໂອ ພຣະປັນຍາກັບຄວາມອ້ອມຮູ້ຂອງພຣະເຈົ້ານັ້ນລ້ຳເລີກສ່ຳໃດ ການຕັດ-
ສິນຂອງເພິ່ນນັ້ນເຫລືອທີ່ຊິຢັ່ງຮູ້ໄດ້ ກັບທາງຂອງເພິ່ນກໍເຫລືອທີ່ຊິສືບຫາເຂົ້າໃຈ
ໄດ້
11:34 ໂດຍວ່າ "ແມ່ນໃຜເຄີຍຢັ່ງຮູ້ໃຈຂອງພຣະຜູ້ເປັນເຈົ້າ ຫລື ແມ່ນໃຜເຄີຍເປັນທີ່
ປຶກສາໃຫ້ເພິ່ນ
11:35 ຫລື ແມ່ນໃຜເຄີຍໃຫ້ພຣະເຈົ້າຢືມອີຫຍັງໄປ ທີ່ເພິ່ນຕ້ອງທົດແທນໃຊ້ເຂົາ
ມາ"
11:36 ໂດຍວ່າ ສິ່ງສາລະພັດນັ້ນໄດ້ມາຈາກພຣະເຈົ້າ ເປັນມາໂດຍພຣະເຈົ້າ ກັບຢູ່
ເພື່ອພຣະເຈົ້າ ຈັ່ງຂໍໃຫ້ສະຫງ່າລາສີອັນຮຸ່ງເຮືອງມີແດ່ເພິ່ນສືບໆ ໄປຕະຫລອດ-
ການເປັນນິດ ອາເມນ

## ໂຣມ ບົດທີ 12

12:1 ພີ່ນ້ອງທັງຫລາຍ ເອີຍ ຄັນເປັນຈັ່ງຊັ້ນແລ້ວ ໂດຍເຫັນແກ່ຄວາມເມດຕາກະ-
ລຸນາຂອງພຣະເຈົ້າ ຂ້ອຍຈັ່ງວອນຂໍໃຫ້ພວກເຈົ້າຖວາຍໂຕເອງເປັນເຄື່ອງບູຊາ
ອັນມີຊີວິດ ເປັນທີ່ບໍລິສຸດ ກັບເປັນທີ່ຍອມຮັບຂອງພຣະເຈົ້າ ຊຶ່ງເປັນການໃຊ້ຊີວິດ
ອັນສົມຄວນຢ່າງມີເຫດມີຜົນ
12:2 ແລ້ວຢ່າຮຽນແບບຕິດຕາມຄ່ານິຍົມຂອງໂລກນີ້** ແຕ່ໃຫ້ຮັບການປ່ຽນ
ຄວາມຄຶດໃໝ່ຊະເດີ້ ເພື່ອເຈົ້າຊິສາມາດຢັ່ງຮູ້ ພິສູດພຣະປະສົງຕາມຄ່ານິຍົມ
ຂອງພຣະເຈົ້າ ວ່າອີຫຍັງເປັນທີ່ດີງາມ ອີຫຍັງເປັນທີ່ຍອມຮັບ ກັບອີຫຍັງເປັນທີ່
ຖືກຕ້ອງອັນດີເລີດຂອງເພິ່ນ
12:3 ທີ່ຂ້ອຍເວົ້ານີ້ກໍເວົ້າໂດຍເຫັນແກ່ພຣະຄຸນທີ່ພຣະເຈົ້າປະທານໃຫ້ຂ້ອຍ ກັບຕໍ່
ຄູ່ຄົນໃນພວກເຈົ້ານຳ ວ່າຢ່າໃຫ້ຄຶດເກີນໂຕ ເກີນກວ່າທີ່ຄວນຊິປະມານນັ້ນ ແຕ່
ຈັ່ງຄຶດອ້ອມຄອບ ຖ່ອມໃຈຖ່ອມໂຕ ສົມກັບຂະໜາດຄວາມເຊື່ອທີ່ພຣະເຈົ້າໄດ້
ໂຜດໃຫ້ແຕ່ລະຄົນ
12:4 ຍ້ອນວ່າ ພວກເຮົາເປັນອະໄວຍະວະຫລາຍແນວໃນຮ່າງກາຍດຽວຂອງ
ພຣະຄຣິດ ນັ້ນ ແລ້ວອະໄວຍະວະແຕ່ລະຢ່າງມີໜ້າທີ່ການງານບໍ່ຄືກັນ

12:5 ຈັ່ງຊັ້ນ ພວກຄົນເຮົາ ຊຶ່ງເປັນຈຳນວນຫລາຍ ຮ່ວມກັນກໍເປັນສະມາຊິກໃນ
ຮ່າງກາຍດຽວຂອງ ພຣະຄຣິດ ກັບເປັນອະໄວຍະວະຕໍ່ກັນແລະກັນ
12:6 ແລ້ວເຮົາຄູ່ຄົນ ຕ່າງຄົນຕ່າງມີພົນສະຫວັນພິເສດຝ່າຍວິນຍານທີ່ແຕກຕ່າງ
ກັນ ຕາມທີ່ພຣະເຈົ້າໄດ້ປະທານໃຫ້ໂດຍພຣະກະລຸນາທິຄຸນຂອງເພິ່ນ ແລ້ວຄັ່ນ
ວ່າພົນສະຫວັນພິເສດຂອງເຈົ້າເປັນການພະຍາກອນ ກໍໃຫ້ພະຍາກອນຕາມຂະ-
ໜາດຂອງຄວາມເຊື່ອ
12:7 ຫລື ຄັ່ນພົນສະຫວັນພິເສດຂອງເຈົ້າເປັນການຮັບໃຊ້ ກໍໃຫ້ຮັບໃຊ້ ຫລືຄັ່ນ
ເປັນການສອນ ພຣະຄຳ ກໍໃຫ້ສອນ ພຣະຄຳ
12:8 ຄັ່ນເປັນການເຕືອນສະຕິ ຄວນຊິເຕືອນສະຕິ ຄັ່ນເປັນການບໍລິຈາກຊ່ອຍ
ເຫລືອ ຄວນຊິຊ່ອຍເຫລືອໂດຍເຕັມໃຈ ແລ້ວສຳລັບຜູ້ທີ່ເປັນຜູ້ປົກຄອງ ຄວນຊິ
ປົກຄອງດ້ວຍການເອົາໃຈໃສ່ ສຳລັບຜູ້ທີ່ສະແດງຄວາມເມດຕາ ຄວນຊິສະແດງ
ດ້ວຍໃຈຊົມຊື່ນຍິນດີ
12:9 ແລ້ວໃຫ້ສະແດງຄວາມຮັກແພງໂດຍບໍ່ລຳອຽງເຂົ້າຂ້າງຜູ້ໃດເລີຍ ກັບໃຫ້
ກຽດຊັງຊັງແນວທີ່ຊົ່ວ ແຕ່ຍຶດໝັ້ນໃນແນວທີ່ດີ
12:10 ໃຫ້ຮັກກັນແລະກັນດ້ວຍຄວາມຮັກຢ່າງພີ່ນ້ອງ ກັບດ້ວຍການໃຫ້ກຽດແກ່ກັນ
ແລະກັນ ໂດຍຖືກັນວ່າ ຜູ້ອື່ນດີກວ່າໂຕ
12:11 ບໍ່ຄວນຊິຂີ້ຄ້ານລ່າຊ້າໃນການງານ ແຕ່ມີໃຈກະຕືລືລົ້ນໃນການຮັບໃຊ້ພຣະ-
ຜູ້ເປັນເຈົ້າ
12:12 ແລ້ວມີການຊົມຊື່ນຍິນດີໃນຄວາມຫວັງ ມີກາລອດທົນພາກພຽນຕໍ່ຄວາມ
ຍາກລຳບາກ ມີການຈົ່ງຮັກພັກດີໃນການອະທິຖານວອນຂໍຢູ່ສະເໝີ
12:13 ມີການບໍລິຈາກຊ່ອຍເຫລືອຄົນຂອງພຣະເຈົ້າໃນຍາມຍາກ ມີຄວາມຍິນດີໃນ
ການຕ້ອນຮັບແຂກ
12:14 ແລ້ວໃຫ້ອວຍພອນພວກຄົນທີ່ຂົ່ມເຫງເຈົ້າເດີ້ ໃຫ້ອວຍພອນຊະ ບໍ່ແມ່ນ
ສາບແຊ່ງເຂົາເດີ້
12:15 ຄວນຊິຊົມຊື່ນຍິນດີກັບຜູ້ທີ່ຊົມຊື່ນຍິນດີ ແລ້ວຄວນຊິຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້

12:16 ຄວນຊິເປັນນ້ຳໜຶ່ງໃຈດຽວຊຶ່ງກັນແລະກັນ ບໍ່ຄວນຊິໃຝ່ສູງ ແຕ່ຄວນຊິຖ່ອມ
ໃຈລົງຕໍ່ຄົນທີ່ຕ່ຳຕ້ອຍກວ່າ ຄືຢ່າເກີນໂຕຖືວ່າໂຕສະຫລາດເດີ້
12:17 ບໍ່ຄວນຊິເຮັດແນວຊົ່ວຕອບແທນແນວຊົ່ວຕໍ່ຜູ້ໃດເລີຍ ແຕ່ຄວນຊິເຮັດແນວ
ຊື່ສັດສຸດຈະຫລິດໃນສາຍຕາຂອງຄົນທັງປວງ
12:18 ແລ້ວຄັ່ນເປັນໄດ້ ທໍ່ທີ່ຂຶ້ນຢູ່ກັບເຈົ້າ ຄວນຊິຢູ່ຢ່າງສະຫງົບສຸກກັບໝົດຄູ່ຄົນ
12:19 ພີ່ນ້ອງທີ່ຮັກທັງຫລາຍ ເອີຍ ບໍ່ຄວນຊິແກ້ແຄ້ນໃນເລື່ອງອິຫຍັງເລີຍ ແຕ່ໃຫ້
ມອບການນັ້ນໄວ້ກັບການແກ້ແຄ້ນລົງໂທດຂອງພຣະເຈົ້າເດີ້ ຄືມີຄຳຂຽນໄວ້ວ່າ
"ການແກ້ແຄ້ນເປັນເລື່ອງຂອງເຮົາ ເຮົາກໍຊິຕອບສະໜອງເອງ" ພຣະຜູ້ເປັນເຈົ້າ
ໄດ້ເວົ້າ
12:20 "ບັດເປັນຈັ່ງຊັ້ນແລ້ວ ຄັ່ນສັດຕູຂອງເຈົ້າຫິວແນວກິນ ກໍໃຫ້ເອົາແນວກິນໃຫ້
ເຂົາຊະເດີ້ ແລ້ວຄັ່ນເຂົາຫິວນ້ຳ ກໍໃຫ້ເອົານ້ຳໃຫ້ເຂົາກິນນຳເດີ້ ຄືໃນການເຮັດຈັ່ງ-
ຊີ້ ເຈົ້າຊິສຸມຖ່ານແດງທີ່ລຸກເປັນໄຟໄວ້ເທິງຫົວຂອງເຂົາເດີ້"
12:21 ໝາຍຄວາມວ່າ ຢ່າໃຫ້ຄວາມຊົ່ວເອົາຊະນະເຈົ້າເດີ້ ແຕ່ໃຫ້ເຈົ້າເອົາຊະນະ
ຄວາມຊົ່ວດ້ວຍຄວາມດີເດີ້

## ໂຣມ ບົດທີ 13

13:1 ໃຫ້ຄູ່ຄົນຍອມຢູ່ໃຕ້ການເບິ່ງແຍງຂອງຜູ້ມີອຳນາດປົກຄອງບ້ານເມືອງເດີ້
ຍ້ອນວ່າບໍ່ມີລະບົບອຳນາດໃດໆ ເລີຍ ທີ່ບໍ່ໄດ້ມາຈາກພຣະເຈົ້າ ກັບວ່າ ອຳນາດ
ຂອງຜູ້ເບິ່ງແຍງຖືນັ້ນ ພຣະເຈົ້າກໍແຕ່ງຕັ້ງຂຶ້ນ
13:2 ຈັ່ງຊັ້ນ ຜູ້ໃດກໍຕາມທີ່ຂັດຂືນຕໍ່ຕ້ານອຳນາດນັ້ນກໍຂັດຂືນຕໍ່ຕ້ານລະບົບບັນຊາ
ການທີ່ພຣະເຈົ້າແຕ່ງຕັ້ງຂຶ້ນ ກັບຜູ້ທີ່ຂັດຂືນຕໍ່ຕ້ານນັ້ນກໍຊິນຳໂທດມາສູ່ໂຕເອງ
13:3 ໂດຍວ່າຜູ້ປົກຄອງນັ້ນກໍບໍ່ເປັນຕາຢ້ານດອກສຳລັບຄົນທີ່ເຮັດແນວດີ ແຕ່ວ່າ
ເປັນຕາຢ້ານສຳລັບຜູ້ທີ່ເຮັດຄວາມຊົ່ວແນວບໍ່ດີ ບັດນີ້ຄັ່ນເຈົ້າບໍ່ຢາກຢ້ານຫົວໜ້າ
ຜູ້ມີອຳນາດນັ້ນ ກໍໃຫ້ເຈົ້າເຮັດແຕ່ແນວດີແນວງາມຊະເດີ້ ແລ້ວເຈົ້າຊິໄດ້ຮັບຄຳ
ຊົມເຊີຍຍົກຍ້ອງຈາກຫົວໜ້ານັ້ນ
13:4 ຍ້ອນວ່າຜູ້ປົກຄອງນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າເພື່ອການດີ ແຕ່ຄັ່ນເຈົ້າ
ເຮັດການຊົ່ວກໍໃຫ້ຢ້ານໄວ້ຊະເດີ້ ຍ້ອນວ່າຜູ້ປົກຄອງນັ້ນບໍ່ໄດ້ຖືດາບໄວ້ຫລິ້ນຊື່ໆ

ຄືເຂົາຜູ້ນັ້ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ ເປັນຜູ້ທີ່ລົງໂທດການຊົ່ວຕໍ່ຄູ່ຄົນທີ່ເຮັດ
ແນວຊົ່ວ
13:5 ຈັ່ງຊັ້ນ ພວກເຈົ້າຄວນຊິເຊື່ອຟັງຜູ້ປົກຄອງບ້ານເມືອງ ບໍ່ແມ່ນເພື່ອການຫລີກ
ລ້ຽງໂທດແນວດຽວ ແຕ່ເພື່ອຄວາມສະບາຍໃຈ ຂອງການສຳນຶກຜິດຊອບຂອງ-
ໂຕ
13:6 ຍ້ອນເຫດນີ້ເນາະ ພວກເຈົ້າຈັ່ງໄດ້ເສຍພາສີ ຍ້ອນເຈົ້າໜ້າທີ່ຜູ້ຖືອຳນາດນັ້ນ
ເປັນຜູ້ຮັບໃຊ້ຂອງພຣະເຈົ້າ ຈັ່ງໄດ້ປະຕິບັດໜ້າທີ່ນີ້ຢູ່ສະເໝີ
13:7 ຈັ່ງຊັ້ນ ໃຫ້ພວກເຈົ້າຕອບສະໜອງຄູ່ຝ່າຍຕາມທີ່ສົມຄວນໄດ້ຮັບເດີ້ ເສຍພາ-
ສີຕາມທີ່ຄວນເສຍ ຈ່າຍຄ່າທຳນຽມຕາມທີ່ຄວນຈ່າຍ ສະແດງການເຄົາລົບໃຫ້ຜູ້
ທີ່ຄວນສະແດງ ກັບໃຫ້ກຽດຕາມທີ່ສົມຄວນຕໍ່ຜູ້ທີ່ຄວນຮັບ
13:8 ຢ່າຕິດໜີ້ອີຫຍັງຕໍ່ຜູ້ໃດເລີຍເດີ້ ນອກຈາກຕິດໜີ້ການຮັກແພງຕໍ່ກັນແລະກັນ
ໂດຍວ່າຜູ້ທີ່ຮັກແພງຜູ້ອື່ນໆ ກໍໄດ້ເຮັດຢ່າງຖືກຕ້ອງຕາມກົດບັນຍັດແລ້ວ
13:9 ຄືກັນກັບທີ່ກົດບັນຍັດກ່າວໄວ້ວ່າ “ຢ່າລ່ວງປະເວນີຜົວເມຍເຂົາ ຢ່າຂ້າຄົນ
ຢ່າລັກຊັບ ຢ່າເປັນພະຍານເທັດ ຢ່າຂີ້ໂລບ” ທັງຂໍ້ອື່ນໆ ນຳ ກໍໄດ້ສະຫລຸບຢູ່ໃນຂໍ້
ດຽວນີ້ຄື “ຄວນຮັກເພື່ອນບ້ານຄືກັນກັບຮັກໂຕເອງ”
13:10 ຄືຄວາມຮັກແທ້ບໍ່ທຳລາຍເພື່ອນບ້ານ ຄັ່ນເປັນຈັ່ງຊັ້ນແລ້ວ ໝາຍຄວາມວ່າ
ຄວາມຮັກນັ້ນ ເປັນທີ່ສຳເລັດຂອງກົດບັນຍັດຄູ່ຂໍ້
13:11 ແລ້ວໃຫ້ເຮັດຈັ່ງຊັ້ນ ໂດຍຮູ້ກັນໄວ້ວ່າ ມັນເຂົ້າເຖິງຍາມເວລານັ້ນແລ້ວ ທີ່ເຮົາ
ຄວນຊິສ່າງນອນຕື່ນໂຕ ຍ້ອນວ່າຄວາມລອດພົ້ນຂອງເຮົານັ້ນໃກ້ຊິມາຮອດແລ້ວ
ແຮງໃກ້ກວ່າທີ່ໄດ້ຮັບເຊື່ອແຕ່ທຳອິດນັ້ນ
13:12 ຄືຍາມກາງຄືນລ່ວງໄປຫລາຍໃກ້ຊິແຈ້ງແລ້ວ ຈັ່ງຊັ້ນ ກໍໃຫ້ພວກເຮົາປົດແນວ
ເຮັດຝ່າຍຄວາມມືດນັ້ນອອກໄປ ແລ້ວສວມເຄື່ອງ ຍຸດທະພັນ ຂອງຄວາມສະ-
ຫວ່າງແຈ້ງໄວ້
13:13 ແລ້ວຂໍໃຫ້ພວກເຮົາດຳເນີນຊີວິດໃຫ້ເໝາະສົມກັບຍາມກາງເວັນ ບໍ່ແມ່ນ
ເຮັດໃນທາງສຸມສີ່ສຸມຫ້າ ກິນເຫລົ້າເມົາຢາ ຫຍາບຄາຍລາມົກ ຫລື ວິວາດອິດສາ
ກັນນັ້ນ

13:14 ແຕ່ໃຫ້ສວມພຣະເຢຊູຄຣິດເຈົ້າໄວ້ ແລ້ວຢ່າເປີດຊ່ອງທາງໄວ້ບຳເລີເນື້ອໜັງ
ໃຫ້ມັນສະໜອງຕັນຫາແຫ່ງເພດຕາມຄວາມຕ້ອງການຂອງມັນເດີ້

## ໂຣມ ບົດທີ 14

14:1 ແລ້ວຝ່າຍຜູ້ທີ່ມີຄວາມເຊື່ອຍັງບໍ່ເຂັ້ມແຂງ ກໍໃຫ້ຮັບເຂົາໄວ້ເດີ້ ແຕ່ບໍ່ແມ່ນເພື່ອ
ໂຕ້ຖຽງກັນໃນເລື່ອງຕ່າງໆ ແນວບໍ່ເປັນສາລະ
14:2 ຄື ຜູ້ໜຶ່ງຖືວ່າກິນອີຫຍັງໄດ້ ໂລດ ບໍ່ມີຜິດ ແຕ່ອີກຜູ້ໜຶ່ງທີ່ຄວາມເຊື່ອຍັງບໍ່
ເຂັ້ມແຂງບໍ່ກ່າກິນ ຢ້ານຜິດ ເລີຍກິນແຕ່ຜັກເທົ່ານັ້ນ
14:3 ຈັ່ງຊັ້ນ ຝ່າຍຜູ້ທີ່ກ້າກິນນັ້ນ ຢ່າດູໝິ່ນດູຖູກຜູ້ທີ່ບໍ່ໄດ້ກິນເດີ້ ແລ້ວຝ່າຍຜູ້ທີ່ບໍ່ກ່າ
ກິນນັ້ນ ຢ່າສູ່ຕັດສິນຜູ້ທີ່ກິນເດີ້ ຄືວ່າພຣະເຈົ້າໄດ້ຮັບເຂົາຄືກັນ
14:4 ຄື ເຈົ້າແມ່ນໃຜ ຈັ່ງມີສິດຕັດສິນຜູ້ຮັບໃຊ້ຂອງຜູ້ອື່ນ ຄືຜູ້ຮັບໃຊ້ຜູ້ນັ້ນຊິຢືນຢູ່
ຫລືວ່າຊິລົ້ມລົງ ມັນຂຶ້ນ ຢູ່ກັບນາຍຂອງເຂົາ ຄືເຂົາກໍຊິຢືນຢູ່ຢ່າງໝັ້ນຄົງ ຍ້ອນວ່າ
ພຣະເຈົ້າສາມາດເຮັດໃຫ້ເຂົາຢືນຢູ່ໄດ້
14:5 ອີກແນວໜຶ່ງ ຜູ້ໜຶ່ງໄດ້ຖືມື້ຖືເວັນ ຍ້ອນຖືວ່າມື້ນັ້ນມື້ນີ້ສຳຄັນກວ່າ ແຕ່ອີກຜູ້ໜຶ່ງ
ເຊື່ອວ່າຄູ່ມື້ສຳຄັນທໍ່ກັນໝົດ ສະຫລຸບແລ້ວໃຫ້ຄູ່ຄົນໝັ້ນໃຈໃນຄວາມຄິດເຫັນ
ຂອງໂຕເອງໃນເລື່ອງນີ້ເດີ້
14:6 ຄືສ່ວນຜູ້ທີ່ຖືມື້ຖືເວັນນັ້ນກໍຖືເພື່ອຖວາຍກຽດແດ່ພຣະຜູ້ເປັນເຈົ້າ ແລ້ວຝ່າຍຜູ້
ທີ່ບໍ່ໄດ້ຖືແນວນັ້ນ ເຂົາກໍເຮັດເພື່ອຖວາຍກຽດແດ່ພຣະຜູ້ເປັນເຈົ້າຄືກັນ ແລ້ວ
ສ່ວນຜູ້ທີ່ກິນກໍກິນຕໍ່ໜ້າພຣະຜູ້ເປັນເຈົ້າດ້ວຍການຂອບຄຸນ ແລ້ວສ່ວນຜູ້ທີ່ບໍ່ໄດ້
ກິນ ເຂົາກໍເຮັດຕໍ່ໜ້າພຣະຜູ້ເປັນເຈົ້າດ້ວຍການຂອບຄຸນຄືກັນ
14:7 ສະຫລຸບແລ້ວ ບໍ່ມີໃຜໃນໝູ່ພວກເຮົາທີ່ດຳເນີນຊີວິດແຕ່ຝ່າຍດຽວ ແລ້ວກໍບໍ່ມີ
ໃຜຕາຍແຕ່ຝ່າຍດຽວ
14:8 ຄື ຄັ່ນເຮົາມີຊີວິດຢູ່ໄດ້ ເຮົາກໍມີຊີວິດຢູ່ຕໍ່ໜ້າພຣະຜູ້ເປັນເຈົ້າ ແລ້ວຄັ່ນເຮົາ
ຕາຍ ເຮົາກໍຕາຍຕໍ່ໜ້າພຣະຜູ້ເປັນເຈົ້າຄືກັນ ຄັ່ນຈັ່ງຊັ້ນ ບໍ່ວ່າເຮົາມີຊີວິດຢູ່ ຫລືວ່າ
ຕາຍໄປກໍຕາມ ເຮົາກໍເປັນຄົນຂອງພຣະຜູ້ເປັນເຈົ້າ
14:9 ຄື ຍ້ອນເຫດນີ້ເອງ ພຣະຄຣິດ ຈັ່ງຍອມຕາຍ ແລ້ວໄດ້ເປັນຂຶ້ນມາມີຊີວິດຕໍ່
ເພື່ອເປັນປະລະບຽງເປັນພຣະຜູ້ເປັນເຈົ້າຂອງທັງຄົນເປັນກັບຄົນຕາຍ

14:10 ແຕ່ວ່າ ເປັນຫຍັງພວກເຈົ້າຈັ່ງຕັດສິນພີ່ນ້ອງ ຫລືເປັນຫຍັງພວກເຈົ້າຈັ່ງດູ-
ໝິ່ນດູຖູກພີ່ນ້ອງຂອງໂຕ ຍ້ອນວ່າເຮົາຜູ້ເຊື່ອໝົດຄູ່ຄົນຊິຕ້ອງຢືນຢູ່ຕໍ່ໜ້າບັນລັງ
ພິພາກສາ**ຂອງ ພຣະຄຣິດ
14:11 ຄືຕາມທີ່ມີ ພຣະຄຳ ຂຽນໄວ້ວ່າ “ພຣະຜູ້ເປັນເຈົ້າກ່າວວ່າ ‘ເຮົາເປັນພຣະເຈົ້າ
ຜູ້ທີ່ດຳລົງຢູ່ ຫົວເຂົ່າຄູ່ຫົວເຂົ່າຊິຂາບລົງຕໍ່ໜ້າເຮົາ ແລ້ວລີ້ນຄູ່ລີ້ນຊິອອກປາກ
ຍອມຮັບວ່າ ເຮົາເປັນພຣະເຈົ້າ’”
14:12 ຈັ່ງຊັ້ນ ເຮົາຄູ່ຄົນຊິຣາຍງານໂຕຕໍ່ໜ້າພຣະເຈົ້າ
14:13 ຄັ່ນຈັ່ງຊັ້ນ ພວກເຮົາບໍ່ຄວນຊິຕັດສິນວ່າກ່າວກັນແລະກັນອີກຕໍ່ໄປ ແຕ່ໃຫ້ພິ-
ຈາລະນາໄວ້ແນວນີ້ເດີ້ ຄືຂໍຢ່າໃຫ້ຜູ້ໜຶ່ງຜູ້ໃດວາງແນວສະດຸດຂວາງທາງພີ່ນ້ອງ
ໄວ້ ທີ່ເປັນເຫດໃຫ້ລົ້ມລົງ
14:14 ຂ້ອຍຮູ້ດີຈັ່ງເຊື່ອໝັ້ນໂດຍທາງ ພຣະເຢຊູເຈົ້າ ວ່າ ບໍ່ມີອີຫຍັງທີ່ເປັນມົນທິນ
ດອກ ແຕ່ສຳລັບຜູ້ທີ່ຄຶດໃນໃຈວ່າເປັນມົນທິນ ມັນກໍເປັນມົນທິນສຳລັບໂຕເຂົາ
14:15 ຈັ່ງຊັ້ນຄັ່ນພີ່ນ້ອງຂອງເຈົ້າບໍ່ສະບາຍໃຈຍ້ອນແນວກິນຂອງເຈົ້ານັ້ນ ກໍສະ-
ແດງວ່າເຈົ້າບໍ່ໄດ້ດຳເນີນໃນທາງຄວາມຮັກ ຄືຢ່າເປັນເຫດໃຫ້ພີ່ນ້ອງຂອງເຈົ້າ
ຕ້ອງສະດຸດຍ້ອນແນວກິນຂອງເຈົ້າເດີ້ ຜູ້ທີ່ ພຣະຄຣິດ ໄດ້ຕາຍແທນນັ້ນ
14:16 ຈັ່ງຊັ້ນ ຢ່າໃຫ້ການດີຂອງເຈົ້າເປັນປາກໃຫ້ຄົນອື່ນຈົ່ມໃສ່ການດີຂອງເຈົ້າເດີ້
14:17 ຍ້ອນວ່າ ລາຊະອານາຈັກຂອງພຣະເຈົ້ານັ້ນ ບໍ່ແມ່ນເລື່ອງການກິນດື່ມ ແຕ່
ເປັນເລື່ອງຄວາມຊອບທຳ ສັນຕິພາບ ກັບຄວາມປິຕິຍິນດີໂດຍທາງ ພຣະວິນ-
ຍານ
14:18 ຄື ຜູ້ທີ່ຮັບໃຊ້ ພຣະຄຣິດ ໃນແນວໝູ່ນີ້ກໍເປັນທີ່ພໍໃຈຂອງພຣະເຈົ້າ ກັບເປັນທີ່
ຍອມຮັບຂອງຄົນນຳ
14:19 ຈັ່ງຊັ້ນ ໃຫ້ເຮົາມຸ້ງໝາຍທີ່ຊິຕິດຕາມແນວທີ່ຊິເຂົ້າສູ່ສັນຕິພາບ ກັບແນວທີ່
ເຮັດໃຫ້ເກີດຄວາມຈະເລີນໃຈ ສົ່ງເສີມຊຶ່ງກັນແລະກັນ
14:20 ໂດຍວ່າ ຢ່າທຳລາຍການງານຂອງພຣະເຈົ້າຍ້ອນເຫັນແກ່ເລື່ອງແນວກິນດື່ມ
ເລີຍ ຍ້ອນວ່າຄູ່ແນວບໍລິສຸດຢູ່ແລ້ວ ແຕ່ວ່າມັນເປັນເຫດໃຫ້ສະດຸດສຳລັບພີ່ນ້ອງຜູ້
ທີ່ຖືວ່າຜິດແຕ່ຍັງຈຳໃຈກິນ

14:21 ຄື ມັນບໍ່ເປັນການດີ ຄັ່ນການກິນຊີ້ນ ຫລືການດື່ມເຫລົ້າອະງຸ່ນດອງ ຫລືການ
ອື່ນໆ ໃດໆ ເປັນເຫດໃຫ້ພີ່ນ້ອງສະດຸດລົງ ຫລືສະດຸ້ງໃຈ ຫລືເຮັດໃຫ້ຄວາມເຊື່ອ
ອ່ອນລົງ
14:22 ເຈົ້າມີຄວາມເຊື່ອເຂັ້ມແຂງດີບໍ້ ກໍໃຫ້ໄວ້ເປັນຂອງສ່ວນໂຕຕໍ່ໜ້າພຣະເຈົ້າເດີ້
ຄືຜູ້ໃດທີ່ເຮັດຈັ່ງຊັ້ນໄດ້ໂດຍບໍ່ຕຳນີ້ໂຕເອງກໍເປັນສຸກໃນແນວທີ່ເຂົາເຮັດ
14:23 ແຕ່ສ່ວນຜູ້ທີ່ກິນດື່ມໂດຍການສົງໄສ ເຂົາຕຳນີ້ໂຕເອງໃນໃຈ ຍ້ອນວ່າເຂົາບໍ່
ໄດ້ກິນດ້ວຍຄວາມເຊື່ອ ໂດຍວ່າແນວໃດທີ່ບໍ່ສາມາດເຮັດໂດຍຄວາມເຊື່ອນັ້ນ ກໍ
ເປັນບາບສຳລັບຜູ້ເຮັດນັ້ນ

## ໂຣມ ບົດທີ 15

15:1 ຈັ່ງຊັ້ນ ພວກເຮົາຜູ້ມີຄວາມເຊື່ອເຂັ້ມແຂງຄວນຊິເຫັນໃຈຊ່ອຍຊູແນວອ່ອນແອ
ຂອງພີ່ນ້ອງ ຜູ້ມີຄວາມເຊື່ອບໍ່ເຂັ້ມແຂງ ແລ້ວບໍ່ຄວນຊິເຮັດຕາມໃຈມັກຂອງໂຕ
ເອງ
15:2 ຄື ໃຫ້ເຮົາຄູ່ຄົນຄຶດເຫັນໃຈເພື່ອນບ້ານ ໂດຍເຫັນແກ່ຜົນປະໂຫຍດ ກັບຊ່ອຍ
ສົ່ງເສີມຄວາມຈະເລີນໃຈຂອງເຂົາ
15:3 ໂດຍວ່າ ແມ່ນແຕ່ ພຣະເຢຊູຄຣິດ ເອງ ເພິ່ນກໍບໍ່ໄດ້ເຮັດອີຫຍັງຕາມໃຈມັກ
ຂອງເພິ່ນ ຄືກັນກັບມີ ພຣະຄຳ ຂຽນໄວ້ແລ້ວວ່າ “ຄວາມອັບປະຍົດອັບອາຍຂອງ
ພວກເຂົາ ໄດ້ຕົກຢູ່ກັບເຮົາ”
15:4 ຄືວ່າ ຄູ່ຢ່າງທີ່ມີຂຽນໄວ້ໃນ ພຣະຄຳ ມາກ່ອນ ກໍຂຽນໄວ້ເພື່ອການສອນການ
ຮຽນຮູ້ຂອງພວກເຮົາ ເພື່ອເຮົາຊິມີຄວາມຫວັງອັນໝັ້ນຄົງໂດຍກາລອດທົນພາກ-
ພຽນ ອົບອຸ່ນໃຈໃນ ພຣະຄຳ ນັ້ນ
15:5 ບັດນີ້ ຂໍໃຫ້ພຣະເຈົ້າຜູ້ໃຫ້ຄວາມພາກພຽນ ກັບຄວາມປອບໂຍນ ໂຜດຊ່ອຍ
ໃຫ້ພວກເຈົ້າທັງຫລາຍເປັນນ້ຳໜຶ່ງໃຈດຽວກັນແລະກັນ ຕາມແບບຢ່າງຂອງ
ພຣະເຢຊູຄຣິດ
15:6 ນີ້ກໍເພື່ອພວກເຈົ້າຊິພ້ອມກັນສັນລະເສີນພຣະເຈົ້າຜູ້ເປັນພໍ່ຂອງພຣະເຢຊູ-
ຄຣິດເຈົ້າຂອງເຮົາ  ດ້ວຍນ້ຳໜຶ່ງໃຈດຽວກັນ ກັບດ້ວຍສຽງປາກພ້ອມພຽງກັນ

15:7 ຈັ່ງຊັ້ນ ໃຫ້ຕ້ອນຮັບກັນແລະກັນ ຄືກັນກັບທີ່ ພຣະຄຣິດ ໄດ້ຊົງຕ້ອນຮັບເຮົາ
ທັງຫລາຍເພື່ອເຂົ້າສູ່ພຣະກຽດຂອງພຣະເຈົ້າ
15:8 ບັດນີ້ ຂ້ອຍວ່າ ພຣະເຢຊູຄຣິດ ຍອມຮັບໃຊ້ຊາວ ອິສະຣາເອນ ພວກທີ່ເຂົ້າ
ພິທີຕັດນັ້ນ ເພື່ອຢືນຢັນເຖິງຄຳໝັ້ນສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ກັບພວກພໍ່ຕະກູນ
ຂອງເຂົາໃນສະໄໝກ່ອນ
15:9 ແລ້ວເພື່ອຄົນຕ່າງຊາດຊິໄດ້ມີໂອກາດຖວາຍກຽດພຣະເຈົ້າ ຍ້ອນຄວາມເມດ-
ຕາຂອງເພິ່ນ ຕາມທີ່ມີ ພຣະຄຳ ຂຽນໄວ້ວ່າ “ຍ້ອນເຫດນີ້ເນາະ ຜູ້ຂ້າຊິຮັບປາກ
ເປັນພະຍານໃຫ້ທ່ານຢູ່ກັບພວກຄົນຕ່າງຊາດ ກັບຊິຮ້ອງເພງສັນລະເສີນພຣະ-
ນາມທ່ານນຳ”
15:10 ແລ້ວໄດ້ມີ ພຣະຄຳ ກ່າວອີກວ່າ “ພວກຄົນຕ່າງຊາດທັງຫລາຍ ເອີຍ ໃຫ້ຊົມ-
ຊື່ນຍິນດີຮ່ວມກັບຄົນຂອງພຣະເຈົ້າເດີ້”
15:11 ແລ້ວຍັງມີຄຳກ່າວອີກວ່າ “ໃຫ້ສັນລະເສີນພຣະຜູ້ເປັນເຈົ້າ ພວກຄົນຕ່າງ-
ຊາດທັງຫລາຍ ເອີຍ ໃຫ້ຖວາຍຍົດຖວາຍກຽດຕໍ່ເພິ່ນເດີ້ ຄົນຊົນຊາດທັງຫລາຍ”
15:12 ແລ້ວ ເອຊາຢາ ໄດ້ເວົ້າອີກວ່າ “ຊິມີຜູ້ໜຶ່ງເກີດມາຕາມເຊື້ອສາຍຂອງ ເຢ-
ຊາຍ ແລ້ວຜູ້ນັ້ນຊິຂຶ້ນຄອບຄອງເໜືອພວກຄົນຕ່າງຊາດ ແລ້ວພວກຄົນຕ່າງຊາດ
ນັ້ນຊິວາງໃຈໃນເພິ່ນຜູ້ນັ້ນ”
15:13 ບັດນີ້ ຂໍພຣະເຈົ້າຜູ້ໃຫ້ຄວາມຫວັງອັນໝັ້ນຄົງ ໂຜດໃຫ້ພວກເຈົ້າເຕັມໄປ
ດ້ວຍຄວາມຊົມຊື່ນຍິນດີ ກັບສັນຕິພາບໂດຍທາງຄວາມເຊື່ອ ເພື່ອພວກເຈົ້າຊິໄດ້
ເຕັມລົ້ນໄປດ້ວຍຄວາມຫວັງອັນໝັ້ນຄົງນັ້ນ ໂດຍລິດກຳລັງຂອງ ພຣະວິນຍານ
15:14 ແລ້ວໂຕຂ້ອຍຈັ່ງເຊື່ອໝັ້ນເຖິງພວກເຈົ້າຜູ້ເປັນພີ່ນ້ອງຂອງຂ້ອຍ ວ່າພວກ
ເຈົ້າປະກອບດ້ວຍຄວາມດີຢ່າງເຕັມປ່ຽມ ກັບດ້ວຍຄວາມຮູ້ຄວາມເຂົ້າໃຈໃນຄູ່
ຢ່າງ ຈັ່ງສາມາດເຕືອນສະຕິເບິ່ງແຍງກັນແລະກັນໄດ້
15:15 ຈັ່ງໃດກໍຕາມ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍໄດ້ຂຽນບາງເລື່ອງເຖິງເຈົ້າໂດຍ
ໃຊ້ຄຳແຮງແໜ່ ເພື່ອເຕືອນຄວາມຈຳຂອງພວກເຈົ້າ ກໍຍ້ອນເລື່ອງພຣະກະລຸນາ-
ທິຄຸນທີ່ພຣະເຈົ້າໄດ້ມອບໝາຍໄວ້ກັບຂ້ອຍນີ້

15:16 ເພື່ອຂ້ອຍຊິໄດ້ເປັນຜູ້ຮັບໃຊ້ຂອງ ພຣະເຢຊູຄຣິດ ນຳເລື່ອງຂ່າວປະເສີດ
ຂອງພຣະເຈົ້າໄປຍັງຄົນຕ່າງຊາດ ເພື່ອຊິໄດ້ຖວາຍຄົນຕ່າງຊາດນັ້ນໄວ້ເປັນ
ເຄື່ອງບູຊາ ເປັນທີ່ຍອມຮັບໃນສາຍຕາຂອງພຣະເຈົ້າ ເປັນຜູ້ບໍລິສຸດສະເພາະ
ເພິ່ນ ໂດຍ ພຣະວິນຍານ
15:17 ຈັ່ງຊັ້ນ ຂ້ອຍມີເຫດທີ່ຊິອວດໃນ ພຣະເຢຊູຄຣິດ ເລື່ອງການຮັບໃຊ້ພຣະເຈົ້າ
ຂອງຂ້ອຍນີ້
15:18 ແຕ່ວ່າຂ້ອຍບໍ່ກ້າອ້າງເຖິງຜົນງານອື່ນໆ ນອກຈາກຜົນງານທີ່ ພຣະຄຣິດ ໄດ້
ເຮັດ ທາງການເວົ້າ ກັບການງານຂອງໂຕຂ້ອຍ ເພື່ອນຳຄົນຕ່າງຊາດມາເຊື່ອຟັງ
15:19 ຄື ຂ້ອຍຈັ່ງປະກາດຂ່າວປະເສີດເລື່ອງ ພຣະຄຣິດ ຢູ່ຄູ່ໝ້ອງ ຈາກເມືອງ ເຢ-
ຣູຊາເລັມ ອ້ອມໄປຮອດເມືອງ ອີລີຣິກົນ ໂດຍມີເຫດການສຳຄັນອັນເປັນສັນຍະ-
ລັກ ກັບມະຫັດສະຈັນອັນເປັນຕາງຶດທີ່ປາກົດໂດຍລິດອຳນາດຂອງ ພຣະວິນ-
ຍານ ຂອງພຣະເຈົ້າ
15:20 ທີ່ຈິງແລ້ວ ຂ້ອຍພະຍາຍາມຕັ້ງໃຈທີ່ຊິປະກາດຂ່າວປະເສີດໃນໝ້ອງໃໝ່ ຄື
ໝ້ອງທີ່ບໍ່ເຄີຍມີໃຜອອກພຣະນາມຂອງ ພຣະຄຣິດ ມາກ່ອນຈັກເທື່ອ ກໍເພື່ອຂ້ອຍ
ຊິບໍ່ໄດ້ກ້າວກ່າຍ ກໍ່ຂຶ້ນທັບງານທີ່ຄົນອື່ນໄດ້ວາງໄວ້ກ່ອນແລ້ວ
15:21 ຕາມທີ່ມີຄຳທຳນາຍໄວ້ກ່ອນວ່າ “ສ່ວນຜູ້ທີ່ບໍ່ເຄີຍມີໃຜໄປປະກາດເລື່ອງເພິ່ນ
ກໍຊິໄດ້ຮູ້ໄດ້ເຫັນ ກັບສ່ວນຜູ້ທີ່ບໍ່ເຄີຍໄດ້ຮັບຟັງ ເຂົາກໍຊິໄດ້ເຂົ້າໃຈ”
15:22 ແລ້ວຍ້ອນເຫດນີ້ເນາະ ຂ້ອຍຈັ່ງຖືກຂັດຂວາງໄວ້ຫລາຍ ຈັ່ງບໍ່ສາມາດມາຫາ
ພວກເຈົ້າໄດ້
15:23 ແຕ່ບັດນີ້ ມັນບໍ່ຈຳເປັນທີ່ຂ້ອຍຕ້ອງຢູ່ນີ້ອີກຕໍ່ໄປ ຂ້ອຍຄຶດຮອດພວກເຈົ້າຕັ້ງ
ຫລາຍປີ ເລີຍປາດຖະໜາຢ່າງແຮງທີ່ຊິມາຫາ
15:24 ຈັ່ງຊັ້ນ ຍາມໃດຂ້ອຍເດີນທາງໄປປະເທດ ສະເປນ ຂ້ອຍຊິແວະມາຫາພວກ
ເຈົ້າ ຫວັງວ່າຊິໄດ້ມາພົ້ມາເຫັນພວກເຈົ້າໃນຂະນະທີ່ໄປ ກັບຮັບຄວາມປອບໂຍນ
ໃຈຈາກພວກເຈົ້ານຳ ກ່ອນໄດ້ເດີນທາງຕໍ່
15:25 ແຕ່ໃນຂະນະນີ້ ຂ້ອຍຊິຂຶ້ນໄປຍັງເມືອງ ເຢຣູຊາເລັມ ໄປຮັບໃຊ້ຊ່ອຍເຫລືອ
ຄົນຂອງພຣະເຈົ້າຢູ່ນັ້ນ

15:26 ຄື ພວກພີ່ນ້ອງໃນແຄວ້ນ ມາເກໂດເນຍ ກັບແຄວ້ນ ອະຂາຢາ ໄດ້ເຫັນດີ
ເຫັນຊອບທີ່ຊິຖວາຍຊັບ ສົ່ງໄປໃຫ້ຊ່ອຍຄົນຂອງພຣະເຈົ້າທີ່ຕົກທຸກໄດ້ຍາກຢູ່ທີ່
ເຢຣູຊາເລັມ
15:27 ຄືພວກພີ່ນ້ອງຄົນຕ່າງຊາດນັ້ນ ຮູ້ສຶກດີໃຈຫລາຍທີ່ມີໂອກາດຊ່ອຍພີ່ນ້ອງ
ຄົນ ຢິວ ຢູ່ເມືອງ ເຢຣູຊາເລັມ ນັ້ນ ມັນກໍສົມຄວນແລ້ວ ຄືເຂົາເປັນໜີ້ພວກຄົນ ຢິວ
ຍ້ອນເຂົາໄດ້ຮັບຫຸ້ນສ່ວນທາງຈິດວິນຍານຈາກຄົນ ຢິວ ກໍຖືກແລ້ວທີ່ພວກເຂົາ
ຢາກຊ່ອຍທາງເຂົ້າຂອງເຄື່ອງໃຊ້ໃນຍາມຍາກຂອງເຂົານັ້ນ
15:28 ຈັ່ງຊັ້ນ ບັດຂ້ອຍໄປມອບແນວຖວາຍນັ້ນໃຫ້ພວກເຂົາແລ້ວ ຂ້ອຍກໍຊິອອກ-
ເດີນທາງໄປຍັງປະເທດ ສະເປນ ແລ້ວຈັ່ງແວະໄປຫາພວກເຈົ້າຢູ່ຫັ້ນນຳ
15:29 ແລ້ວຂ້ອຍໝັ້ນໃຈວ່າ ບັດຂ້ອຍມາຫາພວກເຈົ້ານັ້ນ ໃຈຂ້ອຍກໍຊິເຕັມໄປດ້ວຍ
ພຣະພອນທາງຂ່າວປະເສີດຂອງ ພຣະຄຣິດ
15:30 ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍຈັ່ງວອນຂໍໂດຍເຫັນແກ່ພຣະເຢຊູຄຣິດ-
ເຈົ້າ ກັບເຫັນແກ່ຄວາມຮັກແພງທາງ ພຣະວິນຍານ ໃຫ້ພວກເຈົ້າຊ່ອຍອະທິຖານ
ເວົ້ານຳພຣະເຈົ້າເພື່ອຂ້ອຍດ້ວຍຄວາມກະຕືລືລົ້ນແໜ່
15:31 ເພື່ອຂ້ອຍຊິໄດ້ພົ້ນຈາກມືຂອງຄົນໃນເຂດ ຢູດາຍ ຜູ້ທີ່ບໍ່ໄດ້ຮັບເຊື່ອນັ້ນ ກັບ
ເພື່ອໃຫ້ການຮັບໃຊ້ຊ່ອຍຂອງຂ້ອຍຢູ່ໃນເມືອງ ເຢຣູຊາເລັມ ຊິເປັນທີ່ຍອມຮັບພໍ-
ໃຈຂອງພີ່ນ້ອງຄົນຂອງພຣະເຈົ້າຢູ່ນັ້ນ
15:32 ເພື່ອຂ້ອຍ ອາດ ຊິໄດ້ມາຫາພວກເຈົ້າດ້ວຍຄວາມຊົມຊື່ນຍິນດີຕາມພຣະປະ-
ສົງຂອງພຣະເຈົ້າ ແລ້ວເຮົາທັງສອງຝ່າຍຊິໄດ້ຮັບຄວາມເບີກບານແຈ່ມໃສຢູ່ດີມີ
ແຮງນຳກັນໃນພຣະເຈົ້າ
15:33 ບັດນີ້ ຂໍໃຫ້ພຣະເຈົ້າຜູ້ໂຜດໃຫ້ມີສັນຕິພາບ ສະຖິດຢູ່ກັບພວກເຈົ້າຄູ່ຄົນເຖີ
ອາເມນ

# ໂຣມ ບົດທີ 16

16:1 ບັດນີ້ ຂ້ອຍຂໍແນະນຳ ຟອຍເບ ນ້ອງສາວຂອງເຮົາຝ່າຍວິນຍານ ເປັນຜູ້ຮັບ-
ໃຊ້ໃນກຸ່ມຜູ້ເຊື່ອຢູ່ເມືອງ ເກັນເຂໄອ

16:2 ຈົ່ງຂໍໃຫ້ພວກເຈົ້າຮັບນາງໄວ້ໃນພຣະຜູ້ເປັນເຈົ້າ ຢ່າງເປັນທີ່ສົມຄວນສຳລັບຜູ້
ເປັນຄົນຂອງພຣະເຈົ້າແໜ່ ກັບຂໍໃຫ້ພວກເຈົ້າຊ່ອຍນາງໃນຄູ່ແນວທີ່ນາງຕ້ອງ-
ການ ຍ້ອນນາງມີບົດບາດຫລາຍໃນການຊ່ອຍເຫລືອຫລາຍຄົນ ຮ່ວມທັງນາງໄດ້
ຊ່ອຍໂຕຂ້ອຍນຳ
16:3 ແລ້ວຂໍຝາກຄວາມຄຶດຮອດມາຍັງ ປີຊະກີລາ ກັບ ອາກີລາ ຜູ້ຮ່ວມງານຮັບ-
ໃຊ້ນຳກັນກັບຂ້ອຍໃນ ພຣະເຢຊູຄຣິດ
16:4 ຄືສອງຜົວເມຍນີ້ ໄດ້ຍອມສ່ຽງຊີວິດໂຕເອງເພື່ອປ້ອງກັນຊີວິດຂອງຂ້ອຍ
ຂ້ອຍຈັ່ງຂອບໃຈພຣະເຈົ້າເພື່ອເຂົາ ກັບບໍ່ແມ່ນແຕ່ຂ້ອຍຜູ້ດຽວ ແຕ່ກຸ່ມຜູ້ເຊື່ອຄູ່
ໜ້ອງຂອງພວກຕ່າງຊາດໄດ້ຂອບໃຈພຣະເຈົ້າເພື່ອເຂົາຄືກັນ
16:5 ແລ້ວຂໍຝາກຄວາມຄຶດຮອດມາຍັງກຸ່ມຜູ້ເຊື່ອທີ່ຕຸ້ມໂຮມກັນຢູ່ໃນເຮືອນຂອງ
ເຂົານຳ ແລ້ວຈັ່ງຂໍຝາກຄວາມຄຶດຮອດມາຍັງ ເອປາຍເນດ ຜູ້ທີ່ຂ້ອຍຮັກແພງ
ຫລາຍ ເປັນຄົນທຳອິດທີ່ຮັບເຊື່ອໃນ ພຣະຄຣິດ ໃນແຄວ້ນ ອະຊາຢາ
16:6 ແລ້ວຂໍຝາກຄວາມຄຶດຮອດມາຍັງ ມາຣີອາ ຜູ້ທີ່ໄດ້ທົນໜັກເອົາເບົາສູ້ໃນ
ການຊ່ອຍພວກເຮົາຫລາຍ
16:7 ແລ້ວຂໍຝາກຄວາມຄຶດຮອດມາຍັງ ອັນດາໂຣນິໂກ ກັບ ຢູເນຍ ພີ່ນ້ອງຜູ້ຮ່ວມ
ຊາດນຳຂ້ອຍ ພ້ອມທັງຖືກຈອງຈຳກັບຂ້ອຍນຳ ຊຶ່ງເຂົາມີຊື່ສຽງດີ ເປັນທີ່ນັບຖືໃນ
ໝູ່ພວກທູດພິເສດ ທັງເຂົາໄດ້ເຊື່ອໃນ ພຣະຄຣິດ ກ່ອນຂ້ອຍນຳ
16:8 ແລ້ວຂໍຝາກຄວາມຄຶດຮອດມາຍັງ ອຳເພຍ ຜູ້ທີ່ຂ້ອຍຮັກແພງໃນພຣະຜູ້-
ເປັນເຈົ້າ
16:9 ແລ້ວຂໍຝາກຄວາມຄຶດຮອດມາຍັງ ອູຣະບານ ຜູ້ຮ່ວມງານກັບພວກເຮົາໃນ
ພຣະຄຣິດ ກັບຝາກຄວາມຄຶດຮອດມາຍັງ ຊະຕາຂີ ນຳ ຜູ້ທີ່ຂ້ອຍຮັກແພງຄືກັນ
16:10 ແລ້ວຂໍຝາກຄວາມຄຶດຮອດມາຍັງ ອະເປເລ ຜູ້ທີ່ມີການຍອມຮັບຢ່າງສູງໃນ
ພຣະຄຣິດ ກັບຂໍຝາກຄວາມຄຶດຮອດມາຍັງຄູ່ຄົນໃນເຮືອນຂອງ ອາຣິດໂຕບູໂລ
ນຳ

16:11 ແລ້ວຂໍຝາກຄວາມຄຶດຮອດມາຍັງ ເຮໂຣດີໂອນ ພີ່ນ້ອງຜູ້ຮ່ວມຊາດນຳກັນ-
ກັບຂ້ອຍ ກັບຂໍຝາກຄວາມຄຶດຮອດມາຍັງຄູ່ຄົນໃນເຮືອນຂອງ ນາຣະກິດ ນຳ ຜູ້
ທີ່ຢູ່ໃນພຣະຜູ້ເປັນເຈົ້າຄືກັນ
16:12 ແລ້ວຂໍຝາກຄວາມຄຶດຮອດມາຍັງ ທີຟາຍນາ ກັບ ທີໂຟຊາ ຜູ້ທີ່ໄດ້ທົນໜັກ
ເອົາເບົາສູ້ໃນການຮັບໃຊ້ພຣະຜູ້ເປັນເຈົ້າ ກັບຂໍຝາກຄວາມຄຶດຮອດມາຍັງ ເປຊີ-
ດາ ຜູ້ທີ່ເປັນຕາຮັກແພງ ທີ່ໄດ້ທົນໜັກເອົາເບົາສູ້ໃນການຮັບໃຊ້ພຣະຜູ້ເປັນເຈົ້າຄື
ກັນ
16:13 ແລ້ວຂໍຝາກຄວາມຄຶດຮອດມາຍັງ ຣູໂຟ ຜູ້ທີ່ພຣະຜູ້ເປັນເຈົ້າໄດ້ເລືອກໄວ້
ກັບຂໍຝາກຄວາມຄຶດຮອດມາຍັງແມ່ຂອງເຂົາ ຊຶ່ງຂ້ອຍຖືວ່າເປັນແມ່ຂ້ອຍນຳ
16:14 ແລ້ວຂໍຝາກຄວາມຄຶດຮອດມາຍັງ ອາຊິນກຼິດ ຟະເລໂຄນ ເຮຣະມາ ປະ-
ໂຕບາ ເຮເຣມາ ພ້ອມກັບພີ່ນ້ອງຄູ່ຄົນທີ່ຢູ່ກັບພວກເຂົານັ້ນ
16:15 ແລ້ວຂໍຝາກຄວາມຄຶດຮອດມາຍັງ ຟີໂລໂລກ ກັບ ຢູເລຍ ກັບ ເນເຣ ກັບ
ນ້ອງສາວຂອງເຂົານຳ ກັບ ໂອລິມປາ ກັບຄົນຂອງພຣະເຈົ້າທັງຫລາຍທີ່ຢູ່ກັບຄົນ
ໝູ່ນັ້ນນຳ
16:16 ແລ້ວຂໍຕ້ອນຮັບກັນແລະກັນດ້ວຍການສຳຜັດແກ້ມຕາມທຳນຽມອັນບໍລິສຸດ
ນັ້ນ ຝ່າຍກຸ່ມຜູ້ເຊື່ອຄູ່ກຸ່ມຂອງ ພຣະຄຣິດ ຢູ່ທາງນີ້ ຂໍຝາກຄວາມຄຶດຮອດມາຍັງ
ພວກເຈົ້ານຳເດີ້
16:17 ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍວອນຂໍໃຫ້ພວກເຈົ້າຄອຍຖ້າສັງເກດ ຄົນ
ພວກນັ້ນໄວ້ເດີ້ ຄືພວກທີ່ເຂົ້າມາກໍ່ແນວວຸ້ນວາຍໃຫ້ເກີດການແຕກແຍກກັນ ຊຶ່ງ
ເຮັດໃຫ້ຜູ້ລາງຄົນສະດຸດສະດຸ້ງໃຈລົງ ດ້ວຍຄຳສອນທີ່ຂັດກັນອອກໄປຈາກ
ຫລັກຄຳສອນທີ່ພວກເຈົ້າໄດ້ຮຽນຮູ້ມາແລ້ວນັ້ນ ຈັ່ງໃຫ້ຫລີກລ້ຽງບໍ່ໃຫ້ຄົບກັນກັບ
ເຂົາເລີຍເດີ້
16:18 ຍ້ອນວ່າ ຄົນຈຳພວກນີ້ບໍ່ໄດ້ຮັບໃຊ້ພຣະເຢຊູຄຣິດເຈົ້າຂອງເຮົາ ແຕ່ໄດ້ເຫັນ
ແກ່ທ້ອງຂອງໂຕເອງຕ່າງຫາກ ກັບໄດ້ລໍ້ລວງຄົນໃຫ້ຫລົງເຊື່ອ ຊັກຊວນດ້ວຍຄຳ
ອ່ອນຫວານທີ່ເປັນຕາຟັງ

16:19 ຄືການທີ່ພວກເຈົ້າໄດ້ເຊື່ອຟັງຂ່າວປະເສີດນັ້ນໄດ້ເລື່ອງລືໄປຮອດຄົນທັງ-
ປວງແລ້ວ ຂ້ອຍຈຶ່ງມີຄວາມຍິນດີຍ້ອນເຫັນແກ່ພວກເຈົ້າ ແຕ່ວ່າຂ້ອຍຢາກເຕືອນ
ພວກເຈົ້າໄວ້ ໃຫ້ເປັນຄົນຊຳນານສະຫລາດມີປັນຍາໃນທາງດີງາມ ແລ້ວໃຫ້ບໍລິ-
ສຸດໃນທາງຊົ່ວເດີ້
16:20 ແລ້ວໃນເວລາບໍ່ຊ້າບໍ່ໂດນ ພຣະເຈົ້າຜູ້ໃຫ້ສັນຕິພາບ ຊິປາບປາມບຸກໂຈມຕີ
ພະຍາມານ ຊາຕານຢູ່ໃຕ້ຕີນຂອງພວກເຈົ້າຊະ ສຸດທ້າຍນີ້ຈຶ່ງຂໍໃຫ້ພຣະກະລຸນາ-
ທິຄຸນຂອງພຣະເຢຊູຄຣິດເຈົ້າຂອງເຮົາ ດຳລົງຢູ່ກັບພວກເຈົ້າ ເຖີດ ອາເມນ
16:21 ຝ່າຍ ຕີໂມທຽວ ຜູ້ຮ່ວມງານກັບຂ້ອຍ ພ້ອມທັງ ລູກີໂອ ກັບ ຢາຊິນ ກັບ ໂສ-
ຊີປາໂທ ພີ່ນ້ອງຜູ້ຮ່ວມຊາດຂອງຂ້ອຍນັ້ນ ຂໍຝາກຄວາມຄິດຮອດມາຍັງພວກ
ເຈົ້າ
16:22 ແລ້ວຂ້ອຍນີ້ ກັບ ເຕຣະຕຽວ ຜູ້ຂຽນຈົດໝາຍສະບັບນີ້ໃຫ້ ຈຶ່ງຂໍຝາກຄວາມ
ຄິດຮອດມາຍັງພວກເຈົ້າໃນອົງພຣະຜູ້ເປັນເຈົ້ານຳ
16:23 ແລ້ວ ຄາໂຢ ເຈົ້າຂອງເຮືອນ ກັບເຈົ້າພາບຂອງຂ້ອຍ ຊຶ່ງໄດ້ເປັນເຈົ້າພາບ
ປະຊຸມຂອງກຸ່ມຜູ້ເຊື່ອທີ່ຕຸ້ມໂຣມຢູ່ຫັ້ນນຳ ໄດ້ຝາກຄວາມຄິດຮອດມາຍັງພວກ
ເຈົ້າ ແລ້ວ ເອຣະຊະໂຕ ຜູ້ເປັນນາຍຄັງເມືອງ ໄດ້ຝາກຄວາມຄິດຮອດນຳ ກັບ
ກູອາໂຕ ຜູ້ເປັນພີ່ນ້ອງໃນຄວາມເຊື່ອ ຝາກຄວາມຄິດຮອດມາຄືກັນ
16:24 ຂໍພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງເຮົາ ຢູ່ກັບພວກເຈົ້າທັງຫລາຍເຖີ
ອາເມນ
16:25 ບັດນີ້ ຂໍຖວາຍພຣະກຽດແດ່ພຣະເຈົ້າ ຜູ້ເພິ່ນທີ່ສາມາດກະລຸນາຕັ້ງພວກເຈົ້າ
ທັງຫລາຍໄວ້ໃຫ້ໝັ້ນຄົງຕາມຂ່າວປະເສີດຂອງຂ້ອຍນັ້ນ ຄືການປະກາດເລື່ອງ
ພຣະເຢຊູຄຣິດ ຕາມແຜນງານອັນເລິກລັບຂອງພຣະເຈົ້າຊຶ່ງປິດບັງໄວ້ຕັ້ງແຕ່
ສ້າງໂລກມາ
16:26 ແຕ່ໃນຍາມນີ້ໄດ້ຮັບການເປີດເຜີຍໃຫ້ໄດ້ຮູ້ໄດ້ເຫັນແລ້ວ ຕາມ ພຣະຄຳ ທີ່
ພວກຜູ້ເປັນປາກເປັນສຽງໄດ້ທຳນາຍໄວ້ນັ້ນ ຈຶ່ງປ່າວປະກາດໃຫ້ຄູ່ປະຊາຊາດ
ຕາມຄຳບັນຊາຂອງພຣະເຈົ້າຜູ້ເພິ່ນດຳລົງຢູ່ຕະຫລອດເປັນນິດ ເພື່ອໃຫ້ພວກ-
ເຂົາທັງຫລາຍຫັນມາເຊື່ອຟັງຈຶ່ງຮັບເຊື່ອ

16:27 แด่พระเจ้า ผู้มีปัญญาสูงสุดแต่ผู้เดียว จงขอถวายสะหง่าลาสีโดยทาง
พระเยซูคริด ตะหลอดไปเป็นนิด อาเมน

*[ຂຽນເຖິງຊາວ ໂຣມ ຈາກເມືອງ ໂກຣິນໂທ ກັບສົ່ງໂດຍ ຟອຍເບ ຜູ້ຮັບໃຊ້ພີ່ນ້ອງໃນກຸ່ມ
ຜູ້ເຊື່ອຢູ່ເມືອງ ເກັນເຂໄອ]*

# 1 ໂກຣິນໂທ

## 1 ໂກຣິນໂທ ບົດທີ 1

1:1 ຈາກ ໂປໂລ ຜູ້ທີ່ໄດ້ຮັບການເອີ້ນມາ ຕັ້ງໃຫ້ເປັນທູດພິເສດຂອງ ພຣະເຢຊູ-
ຄຣິດ ໂດຍພຣະປະສົງຂອງພຣະເຈົ້າ ກັບຈາກນາຍ ໂຊຊະເທນ ຜູ້ເປັນພີ່ນ້ອງ
ຂອງເຮົານຳ
1:2 ຮຽນ ກຸ່ມຜູ້ເຊື່ອຂອງພຣະເຈົ້າທີ່ຢູ່ເມືອງ ໂກຣິນໂທ ຜູ້ທີ່ໄດ້ຮັບການຊຳລະໃຫ້-
ເປັນຜູ້ບໍລິສຸດໃນ ພຣະເຢຊູຄຣິດ ຊຶ່ງເພິ່ນໄດ້ເອີ້ນໄດ້ເຊີນມາໃຫ້ເປັນພີ່ນ້ອງຄົນ
ຂອງພຣະເຈົ້ານຳ ຮ່ວມກັນກັບຄົນອື່ນໆ ຢູ່ທຸກໜ້ອງທີ່ອອກນາມຂອງພຣະເຢຊູ-
ຄຣິດເຈົ້າຂອງພວກເຮົາທັງຫລາຍ
1:3 ຂໍໃຫ້ພຣະກະລຸນາທິຄຸນກັບສັນຕິພາບຈາກພຣະເຈົ້າ ພໍ່ຂອງພວກເຮົາ ກັບ
ຈາກພຣະເຢຊູຄຣິດເຈົ້ານຳ ດຳລົງຢູ່ກັບພວກເຈົ້າເດີ້
1:4 ຂ້ອຍຂອບໃຈພຣະເຈົ້າຂອງຂ້ອຍເພື່ອພວກເຈົ້າຢູ່ຕະຫລອດ ຍ້ອນພຣະກະລຸ-
ນາທິຄຸນຂອງພຣະເຈົ້າທີ່ເພິ່ນໃຫ້ກັບພວກເຈົ້າແລ້ວ ໂດຍ ພຣະເຢຊູຄຣິດ
1:5 ທີ່ວ່າພວກເຈົ້າຄົບບໍລິບູນແລ້ວໂດຍເພິ່ນ ທັງໃນທາງຄວາມເວົ້າກັບທາງຄວາມ
ຮູ້ໃນທຸກຢ່າງ
1:6 ໂດຍວ່າ ເລື່ອງ ພຣະເຢຊູຄຣິດ ຕັ້ງໝັ້ນໃນພວກເຈົ້າແລ້ວ
1:7 ຄືວ່າພວກເຈົ້າບໍ່ໄດ້ຂາດພົນສະຫວັນພິເສດຝ່າຍວິນຍານຈາກພຣະເຈົ້າຈັກ
ແນວເລີຍ ໃນຂະນະທີ່ພວກເຈົ້າຄອຍຖ້າການສະເດັດມາຂອງພຣະເຢຊູຄຣິດເຈົ້າ
ຂອງພວກເຮົາ
1:8 ເພິ່ນກໍຊິໃຫ້ເຈົ້າໝັ້ນຄົງຢູ່ຈົນຮອດທີ່ສຸດ ເພື່ອພວກເຈົ້າຊິບໍ່ມີໝ້ອງຕິໃນມື້ສະ-
ເດັດມາຂອງພຣະເຢຊູຄຣິດເຈົ້າຂອງພວກເຮົານັ້ນ

1:9 ຄືພຣະເຈົ້າ ຜູ້ສັດຊື່ ເປັນຜູ້ທີ່ໄດ້ເອີ້ນໄດ້ເຊີນພວກເຈົ້າ ໃຫ້ເຂົ້າມາມີຄວາມສຳ-
ພັນກັບ ພຣະບຸດ ຂອງເພິ່ນ ຄືພຣະເຢຊູຄຣິດເຈົ້າຂອງພວກເຮົາ
1:10 ພີ່ນ້ອງທັງຫລາຍ ເອີຍ ບັດນີ້ຂ້ອຍຈັ່ງຂໍຮ້ອງເຈົ້າໃນນາມຂອງພຣະເຢຊູຄຣິດ-
ເຈົ້າຂອງພວກເຮົາ ເພື່ອຂໍໃຫ້ພວກເຈົ້າເວົ້າໃນທາງດຽວກັນ ບໍ່ມີການແຕກແຍກ
ກັນ ແຕ່ຂໍໃຫ້ຄືນດີກັນ ເປັນນໍ້າໜຶ່ງໃຈດຽວກັນໃນທາງຄວາມຄິດເຫັນ ກັບການ
ຕັດສິນນຳ
1:11 ຄື ພີ່ນ້ອງເອີຍ ມີຄົນໃນຄອບຄົວຂອງນາງ ຂະໂລເອ ໄດ້ເວົ້າສູ່ຂ້ອຍຟັງວ່າ ໄດ້
ມີການແຕກແຍກທຸ່ມຖຽງກັນໃນໝູ່ພວກເຈົ້າ
1:12 ຂ້ອຍໝາຍເຖິງວ່າ ພວກເຈົ້າຕ່າງຄົນຕ່າງກໍເວົ້າວ່າ "ຂ້ອຍເປັນລູກສິດຂອງ
ໂປໂລ " ແໜ່ "ຂ້ອຍເປັນລູກສິດຂອງ ອາໂປໂລ " ແໜ່ "ຂ້ອຍເປັນລູກສິດຂອງ
ເກຟາ " ແໜ່ "ຂ້ອຍເປັນລູກສິດຂອງ ພຣະຄຣິດ " ແໜ່
1:13 ພຣະຄຣິດ ແບ່ງອອກເປັນຫລາຍອົງແລ້ວບໍ້ ຫລື ແມ່ນ ໂປໂລ ບໍ້ທີ່ຖືກຄຶງເພື່ອ
ພວກເຈົ້າ ຫລື ແມ່ນພວກເຈົ້າໄດ້ຮັບບັບຕິດສະມາຈຸ່ມນໍ້າໃນນາມຂອງ ໂປໂລ ບໍ້
1:14 ຂ້ອຍຂອບໃຈພຣະເຈົ້າທີ່ຂ້ອຍບໍ່ໄດ້ໃຫ້ບັບຕິດສະມາຈຸ່ມນໍ້າໃຫ້ຜູ້ໜຶ່ງຜູ້ໃດໃນ
ພວກເຈົ້າເລີຍ ເວັ້ນແຕ່ນາຍ ກີສະໂປ ກັບນາຍ ຄາໂຢ ເທົ່ານັ້ນ
1:15 ຈັ່ງບໍ່ມີຜູ້ໃດສາມາດເວົ້າໄດ້ວ່າ ຂ້ອຍນີ້ໄດ້ເຮັດພິທີບັບຕິດສະມາຈຸ່ມນໍ້າໃນ
ນາມຂອງຂ້ອຍ
1:16 ເອີ້ ແທ້ຈິງແລ້ວ ຂ້ອຍເຄີຍໃຫ້ບັບຕິດສະມາຈຸ່ມນໍ້າໃຫ້ຄົນໃນເຮືອນຂອງ ສະ-
ເຕຟານາ ນຳ ນອກຈາກຄົນໝູ່ນີ້ແລ້ວ ຂ້ອຍຈື່ບໍ່ໄດ້ວ່າຂ້ອຍໄດ້ໃຫ້ບັບຕິດສະມາ
ໃຫ້ຜູ້ໃດອີກ
1:17 ຍ້ອນວ່າ ພຣະຄຣິດ ບໍ່ໄດ້ໃຊ້ຂ້ອຍໄປເພື່ອໃຫ້ປະກອບພິທີຮັບບັບຕິດສະມາ
ຈຸ່ມນໍ້າດອກ ແຕ່ເພື່ອໃຫ້ປະກາດເລື່ອງຂ່າວປະເສີດ ແລ້ວບໍ່ແມ່ນເພື່ອມາເວົ້າ
ດ້ວຍຄຳສະຫລຽວສະຫລາດອັນປະກອບ ດ້ວຍພູມິປັນຍາ ບໍ່ຊັ້ນ ຢ້ານວ່າເລື່ອງ
ໄມ້ກາງແຂນຂອງ ພຣະຄຣິດ ອາດ ຊິບໍ່ປະໂຫຍດໄປຊື່ໆ

1:18 ຄືການປະກາດຂ່າວປະເສີດເລື່ອງໄມ້ກາງແຂນນັ້ນ ເປັນເລື່ອງໂງ່ ສຳລັບຄົນ-
ທີ່ພວມຊິພິນາດໄປ ແຕ່ວ່າສຳລັບພວກເຮົາທີ່ພວມຊິລອດພົ້ນນັ້ນ ກໍເປັນເລື່ອງ
ລິດທານຸພາບຂອງພຣະເຈົ້າ
1:19 ຕາມທີ່ມີຄຳຂຽນໄວ້ແລ້ວວ່າ "ເຮົາຊິທຳລາຍສະຕິປັນຍາຂອງຄົນມີປັນຍາໃຫ້
ໝົດໄປ ກັບຊິເຮັດໃຫ້ຄວາມເຂົ້າໃຈຂອງຄົນສະຫລາດໃຫ້ສູນສິ້ນໄປນຳ"
1:20 ພວກເຈົ້າປັນຍາຢູ່ໃສບັດນີ້ ພວກຜູ້ຂຽນໜັງສືເກັ່ງໆ ຢູ່ໃສ ພວກນັກໂຕ້ບັນຫາ
ຂອງຍຸກນີ້ຢູ່ໃສ ບໍ່ແມ່ນພຣະເຈົ້າໄດ້ເຮັດໃຫ້ປັນຍາວິຊາຄວາມຮູ້ຝ່າຍໂລກນີ້ ໃຫ້
ມັນໂງ່ໄປ
1:21 ຄືຕັ້ງແຕ່ສະຕິປັນຍາຂອງພຣະເຈົ້າ ໄດ້ມາປາກົດແລ້ວ ຊາວໂລກບໍ່ສາມາດ
ຮູ້ຈັກພຣະເຈົ້າໄດ້ເລີຍ ໂດຍປັນຍາຂອງໂຕເອງ ແຕ່ພຣະເຈົ້າເພິ່ນພໍໃຈທີ່ຊິໂປດ
ຜູ້ທີ່ເຊື່ອໃຫ້ລອດພົ້ນ ໂດຍທາງການປະກາດເລື່ອງຂ່າວປະເສີດ ຊຶ່ງຄົນສະ-
ຫລາດນັ້ນວ່າເປັນເລື່ອງໂງ່ຊື່ໆ
1:22 ຄືພວກຄົນ ຢິວ ຢາກເຫັນເຫດການແນວສຳຄັນ ແລ້ວພວກຄົນເກຣັກກໍຊອກ-
ຫາແຕ່ປັນຍາຄວາມຮູ້
1:23 ແຕ່ພວກເຮົາປະກາດແຕ່ເລື່ອງ ພຣະຄຣິດ ຜູ້ໄດ້ຖືກຄຶງທີ່ໄມ້ກາງແຂນນັ້ນ
ເປັນເລື່ອງທີ່ເຮັດໃຫ້ພວກຄົນ ຢິວ ສະດຸດ ກັບເປັນເລື່ອງທີ່ພວກຄົນເກຣັກຖືວ່າໂງ່
1:24 ແຕ່ສຳລັບຜູ້ທີ່ພຣະເຈົ້າໄດ້ເອີ້ນໄດ້ເຊີນມານັ້ນ ບໍ່ວ່າຊິເປັນພວກຄົນ ຢິວ ກໍດີ
ຫລືຊິເປັນພວກຄົນເກຣັກກໍຢ່າ ພຣະຄຣິດ ເປັນລິດທານຸພາບກັບພຣະປັນຍາ
ຂອງພຣະເຈົ້າສຳລັບເຂົາທັງຫລາຍ
1:25 ຍ້ອນວ່າ ເລື່ອງຂອງພຣະເຈົ້າທີ່ເຂົາວ່າໂງ່ນັ້ນ ກໍຍັງມີປັນຍາກະຈັກກະຈາຍ
ແຮງຫລາຍກວ່າຂອງມະນຸດ ກັບເລື່ອງຂອງເພິ່ນທີ່ເຂົາວ່າອ່ອນແອ ກໍຍັງມີພະລັງ
ອຳນາດແຮງຫລາຍກວ່າຂອງມະນຸດຊະອີກ
1:26 ພີ່ນ້ອງທັງຫລາຍເອີຍ ໃຫ້ພິຈາລະນາເບິ່ງແໜ່ ທີ່ພຣະເຈົ້າເພິ່ນໄດ້ເອີ້ນໄດ້
ເຊີນພວກເຈົ້າມານັ້ນ ກໍມີນ້ອຍຄົນທີ່ໂລກຍອມຮັບວ່າເປັນຄົນເກັ່ງມີປັນຍາສູງ
ກັບມີນ້ອຍຄົນທີ່ວ່າມີອຳນາດຫລາຍ ກັບນ້ອຍຄົນທີ່ວ່າມີຕະກູນສູງເປັນຂຸນນາງ

1:27 ແຕ່ວ່າພຣະເຈົ້າເພິ່ນໄດ້ເລືອກເອົາແນວທີ່ໂລກຖືວ່າໂງ່ ເພື່ອຊິເຮັດໃຫ້ຄົນມີ
ປັນຍາຝ່າຍໂລກນີ້ຈົນປັນຍາໄປ ແລ້ວເພິ່ນໄດ້ເລືອກເອົາແນວທີ່ໂລກຖືວ່າອ່ອນ-
ແອ ເພື່ອເຮັດໃຫ້ຄົນທີ່ມີອຳນາດສູງອັບອາຍຂາຍໜ້າໄປເລີຍ
1:28 ແລ້ວພຣະເຈົ້າໄດ້ເລືອກແນວທີ່ໂລກຖືວ່າທຳມະດາສາມັນ ກັບໄດ້ເລືອກແນວ
ທີ່ຖືກດູໝິ່ນເຢາະເຢີ້ຍ ທັງໄດ້ເລືອກແນວທີ່ໂລກຖືວ່າບໍ່ສຳຄັນອີຫຍັງ ເພື່ອຊິເຮັດ
ໃຫ້ແນວຊຶ່ງໂລກຖື ໃຫ້ມັນສູນສິ້ນໄປ
1:29 ເພື່ອຊິບໍ່ໃຫ້ຜູ້ໜຶ່ງຜູ້ໃດອວດໂຕຕໍ່ໜ້າພຣະເຈົ້າໄດ້ເລີຍ
1:30 ຄືໂດຍພຣະເຈົ້ານັ້ນ ພວກເຈົ້າຈັ່ງໄດ້ຢູ່ໃນອົງ ພຣະເຢຊູຄຣິດ ແມ່ນຜູ້ທີ່ພຣະ-
ເຈົ້າໄດ້ຕັ້ງໃຫ້ເປັນປັນຍາຂອງພວກເຮົາທັງຫລາຍ ເປັນຜູ້ໃຫ້ເຮົາເປັນຄົນຊອບ-
ທຳຖືກຕ້ອງຕໍ່ໜ້າພຣະເຈົ້າ ເປັນຜູ້ທີ່ແຍກເຮົາອອກໄວ້ໃຫ້ເປັນຜູ້ບໍລິສຸດສະເພາະ
ເພິ່ນ ພ້ອມທັງເປັນຜູ້ທີ່ໄຖ່ໂທດໃຫ້ພວກເຮົາທັງຫລາຍນຳ
1:31 ເພື່ອໃຫ້ເປັນໄປຕາມຄຳທີ່ມີຂຽນໄວ້ແລ້ວວ່າ “ຜູ້ທີ່ຊິອວດນັ້ນ ກໍໃຫ້ອວດໃນ
ອົງພຣະຜູ້ເປັນເຈົ້າ”

## 1 ໂກຣິນໂທ ບົດທີ 2

2:1 ພີ່ນ້ອງທັງຫລາຍເອີຍ ຕອນຂ້ອຍມາຫາພວກເຈົ້ານັ້ນ ຂ້ອຍບໍ່ໄດ້ມາເປັນພະ-
ຍານໃນການປະກາດເລື່ອງພຣະເຈົ້າໃຫ້ພວກເຈົ້າດ້ວຍໃຊ້ຄຳເວົ້າອັນສະຫລຽວ
ສະຫລາດ ຫລືດ້ວຍສະຕິປັນຍາອັນຊຳນານ
2:2 ຍ້ອນວ່າຂ້ອຍຕັ້ງໃຈຊິບໍ່ມາເວົ້າເລື່ອງຫຍັງໃນໝູ່ພວກເຈົ້າເລີຍ ເວັ້ນແຕ່ເລື່ອງ
ພຣະເຢຊູຄຣິດ ກັບການທີ່ເພິ່ນໄດ້ຖືກຄຶງທີ່ໄມ້ກາງແຂນນັ້ນ
2:3 ແລ້ວຕອນຍາມຂ້ອຍມາຢູ່ນຳພວກເຈົ້ານັ້ນ ຂ້ອຍກໍອ່ອນກຳລັງ ທັງຢ້ານຮອດ
ໂຕສັ່ນ
2:4 ແລ້ວຄຳເວົ້າກັບການປະກາດຂອງຂ້ອຍຕອນນັ້ນ ບໍ່ແມ່ນຄຳຊັກຊວນທີ່ເຕັມ
ໄປດ້ວຍສະຕິປັນຍາຂອງມະນຸດດອກ ແຕ່ປະກອບດ້ວຍການສຳແດງຂອງ
ພຣະວິນຍານ ກັບລິດອຳນາດຂອງພຣະເຈົ້າ
2:5 ເພື່ອວ່າຄວາມເຊື່ອຂອງພວກເຈົ້າຊິບໍ່ໄດ້ຂຶ້ນຢູ່ກັບສະຕິປັນຍາຂອງມະນຸດ ແຕ່
ໄດ້ຂຶ້ນຢູ່ກັບລິດອຳນາດຂອງພຣະເຈົ້າຕ່າງຫາກ

2:6 ຈັ່ງໃດກໍຢ່າ ພວກເຮົາຈັ່ງໄດ້ເວົ້າກັບຄົນທີ່ເປັນຜູ້ໃຫຍ່ແລ້ວ ໂດຍໃຊ້ຄໍາປັນຍາ
ແຕ່ເຮົາບໍ່ໄດ້ໃຊ້ປັນຍາທາງໂລກນີ້ ຫລືປັນຍາຂອງຜູ້ປົກຄອງໃນໂລກນີ້ ຊຶ່ງປັນ-
ຍາແນວນັ້ນຊິສູນສິ້ນໄປ
2:7 ແຕ່ພວກເຮົາເວົ້າໃນທາງປັນຍາຂອງພຣະເຈົ້າ ຊຶ່ງເປັນຄວາມເລິກລັບ ຄືປັນ-
ຍາທີ່ຖືກປິດຊ່ອນໄວ້ນັ້ນ ຊຶ່ງພຣະເຈົ້າໄດ້ກໍານົດໄວ້ກ່ອນທີ່ເພິ່ນຊິສ້າງໂລກ ກໍ
ເພື່ອສັກສີຂອງພວກເຮົາ
2:8 ຊຶ່ງບໍ່ມີຜູ້ປົກຄອງຄົນໃດໃນໂລກນີ້ໄດ້ຮູ້ຈັກປັນຍາຂອງພຣະເຈົ້ານັ້ນເລີຍ ຍ້ອນ
ວ່າຄັ່ນຮູ້ຈັກແລ້ວ ເຂົາຄືຊິບໍ່ໄດ້ຄຶງພຣະຜູ້ເປັນເຈົ້າ ຜູ້ທີ່ປະກອບດ້ວຍສະຫງ່າລາສີ
ໄວ້ທີ່ໄມ້ກາງແຂນນັ້ນດອກ
2:9 ຄືກັນກັບທີ່ມີຄໍາຂຽນໄວ້ແລ້ວວ່າ “ແນວທີ່ຕາບໍ່ເຄີຍເຫັນ ແນວທີ່ຫູບໍ່ເຄີຍໄດ້ຍິນ
ກັບແນວທີ່ບໍ່ເຄີຍເຂົ້າໃນໃຈຂອງມະນຸດ ແມ່ນແນວນັ້ນ ທີ່ພຣະເຈົ້າໄດ້ຈັດກຽມໄວ້
ແລ້ວສໍາລັບຜູ້ທີ່ຮັກແພງເພິ່ນ”
2:10 ແລ້ວພຣະເຈົ້າໄດ້ເປີດເຜີຍ ແນວໝູ່ນີ້ໃຫ້ກັບພວກເຮົາໂດຍທາງ ພຣະວິນ-
ຍານ ຂອງເພິ່ນ ຍ້ອນວ່າ ພຣະວິນຍານ ນັ້ນຢັ່ງຮູ້ໝົດຄູ່ແນວ ບໍ່ວ່າຊິເປັນຄວາມລໍ້າ
ເລິກຂອງພຣະເຈົ້າກໍຢັ່ງຮູ້
2:11 ຄືແມ່ນໃຜສາມາດຮູ້ຈັກແນວຄວາມຄຶດຂອງມະນຸດໄດ້ນອກຈາກຈິດວິນຍານ
ຂອງມະນຸດຜູ້ນັ້ນ ໃນທໍານອງດຽວກັນ ບໍ່ມີໃຜສາມາດຮູ້ຈັກແນວຄວາມຄຶດຂອງ
ພຣະເຈົ້າໄດ້ ນອກຈາກ ພຣະວິນຍານ ຂອງເພິ່ນເອງ
2:12 ບັດນີ້ພວກເຮົາທັງຫລາຍໄດ້ຮັບວິນຍານແລ້ວ ແຕ່ບໍ່ແມ່ນວິນຍານທາງໂລກນີ້
ຄືເປັນ ພຣະວິນຍານ ຊຶ່ງມາຈາກພຣະເຈົ້າ ເພື່ອພວກເຮົາຊິໄດ້ຮູ້ຈັກແນວຕ່າງໆ
ທີ່ພຣະເຈົ້າໄດ້ໂຜດໃຫ້ພວກເຮົາຢ່າງເຫລືອລົ້ນ
2:13 ຄືແນວນັ້ນທີ່ພວກເຮົາໄດ້ບອກມາແລ້ວ ບໍ່ແມ່ນດ້ວຍຖ້ອຍຄໍາຕາມປັນຍາ
ຂອງມະນຸດທີ່ເຂົາສອນກັນໄວ້ ແຕ່ດ້ວຍຖ້ອຍຄໍາຊຶ່ງ ພຣະວິນຍານ ບໍລິສຸດໄດ້
ສອນ ຄືເປັນການເອົາຄວາມຈິງຝ່າຍວິນຍານມາປຽບທຽບກັນກັບແນວຝ່າຍວິນ-
ຍານ

2:14 ແຕ່ວ່າມະນຸດທຳມະດານັ້ນ ບໍ່ສາມາດທີ່ຊິຮັບເອົາຄວາມຈິງຝ່າຍ ພຣະວິນ-
ຍານ ຂອງພຣະເຈົ້າໄດ້ເລີຍ ຍ້ອນເຂົາຖືວ່າມັນເປັນເລື່ອງໂງ່ ຄືໃຈຂອງເຂົາບໍ່
ສາມາດຮັບຮູ້ໄດ້ເລີຍ ຍ້ອນວ່າການທີ່ຊິເຂົ້າໃຈຄວາມຈິງຂອງພຣະເຈົ້າໄດ້ນັ້ນ ກໍ
ຕ້ອງສຳຜັດດ້ວຍຈິດວິນຍານ
2:15 ຄືມະນຸດຜູ້ທີ່ຢູ່ຝ່າຍວິນຍານ ສາມາດວິເຄາະໝົດຄູ່ແນວໄດ້ ແຕ່ບໍ່ມີໃຜສາ-
ມາດວິເຄາະໃຈຂອງເຂົາຜູ້ນັ້ນໄດ້ເລີຍ
2:16 ໃນທຳນອງດຽວກັນ “ແມ່ນໃຜແໜ່ ທີ່ຮູ້ຈັກຄວາມນຶກຄຶດຂອງພຣະຜູ້ເປັນເຈົ້າ
ເພື່ອຊິແນະນຳສັ່ງສອນໃຫ້ເພິ່ນໄດ້” ແຕ່ພວກເຮົາໄດ້ມີຄວາມນຶກຄຶດຂອງ ພຣະ-
ຄຣິດ ແລ້ວ

## 1 ໂກຣິນໂທ ບົດທີ 3

3:1 ພີ່ນ້ອງທັງຫລາຍ ເອີຍ ຂ້ອຍບໍ່ສາມາດທີ່ຊິເວົ້າກັບພວກເຈົ້າຄືກັນກັບເວົ້າກັບຜູ້
ທີ່ຢູ່ຝ່າຍວິນຍານ ແຕ່ຕ້ອງເວົ້າກັບພວກເຈົ້າຄືກັບຄົນຜູ້ທີ່ຢູ່ຝ່າຍເນື້ອໜັງ ຄືເວົ້າ
ກັບຄົນຍັງເປັນເດັກນ້ອຍໃນ ພຣະຄຣິດ
3:2 ຄືຂ້ອຍຕ້ອງເອົານ້ຳນົມມາລ້ຽງພວກເຈົ້າແທນທີ່ຊິເອົາແນວກິນແບບແຂງຂອງ
ຜູ້ໃຫຍ່ມາລ້ຽງ ຍ້ອນວ່າພວກເຈົ້າຍັງບໍ່ທັນພ້ອມທີ່ຊິຮັບເອົາໄດ້ ກັບເຖິງແມ່ນ
ຕອນນີ້ ພວກເຈົ້າຍັງຮັບເອົາບໍ່ໄດ້ເລີຍ
3:3 ຄື ພວກເຈົ້າຍັງຢູ່ຝ່າຍເນື້ອໜັງ ຍ້ອນວ່າພວກເຈົ້າກໍຍັງອິດສາກັນ ກັບມີການ
ໂຕ້ຖຽງແຕກແຍກກັນ ນັ້ນສະແດງວ່າພວກເຈົ້າກໍຍັງຢູ່ຝ່າຍເນື້ອໜັງ ແລ້ວຍັງໃຊ້
ຊີວິດຕາມນິໄສມະນຸດເກົ່າ ບໍ່ແມ່ນບໍ້
3:4 ຍ້ອນວ່າ ຄົນໜຶ່ງຊິເວົ້າວ່າ “ຂ້ອຍເປັນລູກສິດຂອງ ໂປໂລ ” ແລ້ວກໍມີອີກຄົນ
ໜຶ່ງເວົ້າວ່າ “ຂ້ອຍນີ້ເປັນລູກສິດຂອງ ອາໂປໂລ ” ຄັ່ນເປັນຈັ່ງຊີ້ແລ້ວບໍ່ແມ່ນພວກ
ເຈົ້າຢູ່ຝ່າຍເນື້ອໜັງບໍ້
3:5 ໂປໂລ ນັ້ນແມ່ນໃຜ ແລ້ວ ອາໂປໂລ ແມ່ນໃຜ ບໍ່ແມ່ນເຂົາເປັນແຄ່ຜູ້ຮັບໃຊ້ບໍ້
ທີ່ມາເວົ້າຂ່າວປະເສີດ ແລ້ວພວກເຈົ້າຈັ່ງໄດ້ເຊື່ອ ຕາມທີ່ພຣະຜູ້ເປັນເຈົ້າໄດ້ໂປດ
ກຳນົດໄວ້ໃຫ້ຄູ່ຄົນແລ້ວ

3:6 ຄືຂ້ອຍ ໂປໂລ ນີ້ ໄດ້ມາປູກ ແລ້ວ ອາໂປໂລ ນັ້ນ ລາວ ໄດ້ມາຫົດນໍ້າ ແຕ່ແມ່ນ
ພຣະເຈົ້າ ເປັນຜູ້ທີ່ເຮັດໃຫ້ເກີດດອກອອກຜົນທະວີຂຶ້ນ
3:7 ຈັ່ງຊັ້ນ ຄົນທີ່ປູກກັບຄົນທີ່ຫົດນໍ້າກໍບໍ່ສໍາຄັນອີຫຍັງດອກ ແຕ່ແມ່ນພຣະເຈົ້າຜູ້ທີ່
ເຮັດໃຫ້ເກີດດອກອອກຜົນທະວີຂຶ້ນນັ້ນ ເປັນຜູ້ທີ່ສໍາຄັນ
3:8 ບັດນີ້ ຄົນທີ່ປູກກັບຄົນທີ່ຫົດນໍ້າກໍເປັນພວກດຽວກັນ ແຕ່ຄູ່ຄົນກໍຊິໄດ້ຮັບລາງ-
ວັນເປັນຄ່າຕອບແທນຂອງແຕ່ລະຄົນຕາມທີ່ໂຕໄດ້ເຮັດ
3:9 ຄືວ່າ ພວກເຮົາທັງຫລາຍເປັນຜູ້ຮ່ວມງານນໍາກັນກັບພຣະເຈົ້າ ແລ້ວພວກເຈົ້າ
ເປັນໄຮ່ນາ ກັບເປັນຕຶກຂອງພຣະເຈົ້າ
3:10 ແລ້ວໂດຍພຣະກະລຸນາທີ່ຄຸນຂອງພຣະເຈົ້າທີ່ເພິ່ນໄດ້ໂຜດໃຫ້ຂ້ອຍນັ້ນ
ຂ້ອຍຈັ່ງວາງຮາກຖານລົງແລ້ວ ຄືກັນກັບສະຖາປະນິກຜູ້ຊໍານານ ແລ້ວຄົນຜູ້ອື່ນ
ກໍເປັນຜູ້ກໍ່ກັນຂຶ້ນ ແຕ່ວ່າຂໍໃຫ້ແຕ່ລະຄົນລະວັງໃຫ້ດີ ວ່າເຂົາຊິກໍ່ຂຶ້ນມາແບບໃດ
3:11 ຍ້ອນວ່າ ບໍ່ມີໃຜຊິວາງຮາກຖານອື່ນໄດ້ອີກເລີຍ ນອກຈາກທີ່ໄດ້ວາງໄວ້ແລ້ວ
ແລ້ວຮາກຖານນັ້ນ ຄື ພຣະເຢຊູຄຣິດ
3:12 ແລ້ວຄັ່ນຜູ້ໃດຊິກໍ່ອີຫຍັງຂຶ້ນເທິງຮາກຖານນັ້ນ ບໍ່ວ່າຊິກໍ່ດ້ວຍທອງຄໍາ ເງິນ
ເພັດພອຍ ໄມ້ ຫຍ້າແຫ້ງ ຫລືເຟືອງກໍຕາມ
3:13 ການງານຂອງແຕ່ລະຄົນຊິຖືກເປີດເຜີຍ ຍ້ອນວ່າມື້ທີ່ຊິມາຮອດຫັ້ນ ຊິສໍາແດງ
ໃຫ້ເຫັນຢ່າງຊັດເຈນ ຄືຊິຖືກເປີດເຜີຍດ້ວຍໄຟ ແລ້ວໄຟນັ້ນຊິພິສູດໃຫ້ເຫັນວ່າ
ການງານຂອງແຕ່ລະຄົນມີຄຸນຄ່າສໍ່າໃດ
3:14 ຄັ່ນການງານຂອງຜູ້ໃດທີ່ກໍ່ຂຶ້ນນັ້ນຊິທົນໄຟຄົງຢູ່ໄດ້ ຜູ້ນັ້ນກໍຊິໄດ້ຮັບລາງວັນ
ເປັນຄ່າຕອບແທນ
3:15 ແລ້ວຄັ່ນການງານຂອງຜູ້ໃດຖືກເຜົາໄໝ້ໄປ ຜູ້ນັ້ນກໍຊິມີການເສຍຫາຍ ແຕ່ໂຕ
ເຂົາເອງກໍຊິລອດພົ້ນ ຄືກັນກັບລອດຈາກໄຟ
3:16 ພວກເຈົ້າບໍ່ຮູ້ບໍ້ ວ່າເຈົ້າເປັນວິຫານຂອງພຣະເຈົ້າ ແລ້ວ ພຣະວິນຍານ ຂອງ
ເພິ່ນໄດ້ສະຖິດຢູ່ໃນພວກເຈົ້າ

3:17 ແລ້ວຄັນແມ່ນຜູ້ໃດທຳລາຍວິຫານຂອງພຣະເຈົ້າ ພຣະເຈົ້າກໍຊິທຳລາຍຜູ້ນັ້ນ
ຍ້ອນວິຫານຂອງພຣະເຈົ້າເປັນທີ່ສັກສິດບໍລິສຸດ ແລ້ວພວກເຈົ້າກໍເປັນວິຫານນັ້ນ
ເອງ
3:18 ຢ່າໃຫ້ຜູ້ໃດຫລອກລວງໂຕເອງເດີ້ ຄືຄັນຜູ້ໃດໃນພວກເຈົ້າຄຶດວ່າໂຕເອງເປັນ
ຄົນມີປັນຍາຕາມຍຸກນີ້ ຈັ່ງໃຫ້ຜູ້ນັ້ນຍອມເປັນຄົນໂງ່ຈັ່ງຊິເປັນຄົນມີປັນຍາອັນແທ້
ຈິງໄດ້
3:19 ຍ້ອນວ່າ ປັນຍາຂອງໂລກນີ້ເປັນຄວາມໂງ່ສຳລັບພຣະເຈົ້າ ດ້ວຍມີຄຳຂຽນ-
ໄວ້ແລ້ວວ່າ “ເພິ່ນຈັບພວກເຈົ້າປັນຍາດ້ວຍກົນອຸບາຍຂອງເຂົາເອງ”
3:20 ແລ້ວມີຄຳຂຽນໄວ້ອີກວ່າ “ພຣະຜູ້ເປັນເຈົ້າເພິ່ນຢັ່ງຮູ້ເຖິງຄວາມນຶກຄຶດຂອງ
ພວກເຈົ້າປັນຍາ ວ່າມັນບໍ່ເປັນສາລະປະໂຫຍດອີຫຍັງເລີຍ”
3:21 ຈັ່ງຊັ້ນຢ່າໃຫ້ຜູ້ໃດຍົກຍ້ອງອວດໃນໂຕຄົນ ຍ້ອນວ່າໝົດຄູ່ແນວເປັນຂອງ
ພວກເຈົ້າຢູ່ແລ້ວ
3:22 ແລ້ວ ບໍ່ວ່າຊິເປັນ ໂປໂລ ກໍດີ ອາໂປໂລ ກໍດີ ເກຟາ ກໍດີ ຫລືໂລກ ຫລືຊີ-
ວິດ ຫລືຄວາມຕາຍ ຫລືເປັນແນວໃນປະຈຸບັນນີ້ ຫລືແນວທີ່ຊິມີມາໃນອະນາຄົດກໍ
ຕາມ ແນວໝູ່ນີ້ກໍເປັນຂອງພວກເຈົ້າໝົດຢູ່ແລ້ວ
3:23 ແລ້ວພວກເຈົ້າເປັນຂອງ ພຣະຄຣິດ ແລ້ວ ພຣະຄຣິດ ກໍເປັນຂອງພຣະເຈົ້າ

## 1 ໂກຣິນໂທ ບົດທີ 4

4:1 ໃຫ້ຄູ່ຄົນຖືກັນວ່າ ພວກເຮົາເປັນຜູ້ຮັບໃຊ້ຂອງ ພຣະຄຣິດ ກັບເປັນຜູ້ເບິ່ງແຍງ
ແນວລ້ຳເລິກຂອງພຣະເຈົ້ານຳ
4:2 ຍິ່ງກວ່ານັ້ນອີກ ຜູ້ທີ່ຊິເປັນຜູ້ເບິ່ງແຍງນັ້ນ ຊິຕ້ອງເປັນຄົນຈິ່ງຮັກພັກດີ
4:3 ແລ້ວສຳລັບຂ້ອຍນີ້ ການທີ່ພວກເຈົ້າຫລືຄົນຜູ້ໃດກໍຢ່າ ຊິຕັດສິນໂຕຂ້ອຍ
ຂ້ອຍຖືວ່າເປັນເລື່ອງນ້ອຍໆ ເຖິງແມ່ນໂຕຂ້ອຍກໍຍັງບໍ່ໄດ້ຕັດສິນໂຕເອງເລີຍ
4:4 ຍ້ອນວ່າ ສຳລັບຂ້ອຍແລ້ວ ຈິດສຳນຶກຂອງຂ້ອຍບໍ່ໄດ້ຟ້ອງວ່າຂ້ອຍມີແນວຜິດ-
ພາດອີຫຍັງເລີຍ ຈັ່ງໃດກໍຕາມ ຂ້ອຍບໍ່ໄດ້ຖືວ່າຂ້ອຍຖືກຕ້ອງຈັ່ງຊີ້ດອກ ຍ້ອນວ່າ
ແມ່ນພຣະຜູ້ເປັນເຈົ້າ ເປັນຜູ້ຕັດສິນໂຕຂ້ອຍ

4:5 ຈັ່ງຊັ້ນພວກເຈົ້າບໍ່ຄວນຊິຕັດສິນອີຫຍັງກ່ອນຊິຮອດຍາມ ຄືຈົນກວ່າພຣະຜູ້-
ເປັນເຈົ້າຊິສະເດັດມາ ຜູ້ເພິ່ນຊິເປີດເຜີຍແນວທີ່ຖືກປິດຊ່ອນໄວ້ຢູ່ໃນຄວາມມືດ
ໃຫ້ມັນແຈ້ງອອກໝົດ ກັບຊິເປີດເຜີຍຄວາມນຶກຄຶດໃນໃຈຂອງແຕ່ລະຄົນນຳ
ແລ້ວໃນບັດນັ້ນ ຄຳຊົມເຊີຍທີ່ຄູ່ຄົນຊິໄດ້ຮັບນັ້ນກໍຊິມາຈາກພຣະເຈົ້າ
4:6 ພີ່ນ້ອງທັງຫລາຍ ເອີຍ ແນວທີ່ຂ້ອຍໄດ້ເອົາມາເວົ້ານີ້ ຂ້ອຍເວົ້າເຖິງໂຕເອງກັບ
ອາໂປໂລ ເປັນໂຕຢ່າງ ເພື່ອເປັນປະໂຫຍດໃຫ້ພວກເຈົ້າ ໃຫ້ຮຽນຮູ້ຈາກພວກ
ເຮົາ ວ່າບໍ່ຄວນຊິຍົກຍ້ອງຄົນໃດຄົນໜຶ່ງເກີນກວ່າທີ່ມີຂຽນໄວ້ນັ້ນ ກໍເພື່ອບໍ່ມີໃຜ
ຍົກຜູ້ໃດຜູ້ໜຶ່ງເໜືອຜູ້ອື່ນເດີ້
4:7 ຄືແມ່ນຜູ້ໃດທີ່ເຮັດໃຫ້ເຈົ້າດີເດັ່ນກວ່າຄົນອື່ນ ແລ້ວພວກເຈົ້າມີອີຫຍັງທີ່ເຈົ້າບໍ່
ໄດ້ຮັບມາ ແລ້ວຄັ່ນໄດ້ຮັບມາ ເປັນຫຍັງເຈົ້າຈັ່ງອວດຄືບໍ່ໄດ້ຮັບມາເລີຍ
4:8 ພວກເຈົ້າອີ່ມໜຳສຸກສະບາຍແລ້ວນໍ້ ພວກເຈົ້າຮັ່ງມີແລ້ວນໍ້ ພວກເຈົ້າໄດ້ປົກ-
ຄອງຄືກະສັດແລ້ວນໍ້ ຄືພວກເຮົາບໍ່ມີສ່ວນຮ່ວມນຳເນາະ ຂ້ອຍຢາກໃຫ້ພວກເຈົ້າ
ຂຶ້ນບັນລັງປົກຄອງອີຫລີ ເພື່ອເຮົາຊິໄດ້ຂຶ້ນປົກຄອງນຳກັນກັບເຈົ້າ
4:9 ຄື ຂ້ອຍຄຶດວ່າ ພຣະເຈົ້າໄດ້ຕັ້ງພວກເຮົາຜູ້ເປັນທູດພິເສດໄວ້ຢູ່ທ້າຍໝູ່ ພໍຄືຄົນ
ຖືກປັບໂທດຮອດຕາຍ ຍ້ອນວ່າພວກເຮົາຖືກມອງເປັນຄົນແປກປະຫລາດ ເປັນທີ່
ຜິດສັງເກດຕໍ່ໂລກ ຕໍ່ເທວະທູດ ພ້ອມທັງຕໍ່ຄົນອື່ນໆ ນຳ
4:10 ພວກເຮົາເປັນຄົນໂງ່ບ້າເບົາປັນຍາຍ້ອນເຫັນແກ່ ພຣະຄຣິດ ແຕ່ຝ່າຍພວກ
ເຈົ້າເປັນຄົນມີປັນຍາຫລາຍ ພວກເຮົາເປັນຄົນອ່ອນກຳລັງ ແຕ່ຝ່າຍພວກເຈົ້າ
ເປັນຄົນເຂັ້ມແຂງ ພວກເຮົາເປັນຄົນອັບປະຍົດ ແຕ່ຝ່າຍພວກເຈົ້າໄດ້ມີກຽດສູງ
4:11 ແມ່ນແຕ່ບັດນີ້ ພວກເຮົາກໍຍັງຫິວເຂົ້າຫິວນໍ້າ ທັງຂາດແນວນຸ່ງທີ່ດີ ຖືກບຽດ-
ບຽນຂ້ຽນຕີ ບໍ່ມີໝ້ອງຢູ່ອາໄສເປັນຫລັກເປັນແຫລ່ງເລີຍ
4:12 ເອີ້ ພວກເຮົາເຮັດງານໜັກດ້ວຍມືໂຕເອງ ບັດຖືກດ່າພວກເຮົາກໍອວຍພອນ
ບັດຖືກຂົ່ມເຫງພວກເຮົາກໍອົດທົນເອົາ
4:13 ບັດຖືກຄົນວ່າໃສ່ຮ້າຍໃສ່ຄວາມ ພວກເຮົາກໍອ້ອນວອນຂໍຮ້ອງເອົາ ພວກເຮົາ
ກໍກາຍເປັນກາກເປັນເດນຂອງໂລກ ຄື ເສດ ຂອງຄູ່ຢ່າງຈົນຮອດປະຈຸບັນນີ້ເລີຍ

4:14 ຂ້ອຍບໍ່ໄດ້ຂຽນແນວນີ້ເພື່ອຊິໃຫ້ພວກເຈົ້າອັບອາຍຂາຍໜ້າດອກ ແຕ່ໄດ້ຂຽນ
ເພື່ອຊິເຕືອນສະຕິໃນຖານະທີ່ພວກເຈົ້າເປັນລູກທີ່ຮັກແພງຂອງຂ້ອຍ
4:15 ຄື ເຖິງແມ່ນພວກເຈົ້າຊິມີຄູໃນ ພຣະຄຣິດ ເປັນພັນເປັນໝື່ນກໍຕາມ ພວກເຈົ້າ
ມີແຕ່ຂ້ອຍແຕ່ຜູ້ດຽວທີ່ເປັນພໍ່ ຍ້ອນວ່າແມ່ນຂ້ອຍນີ້ ທີ່ໃຫ້ພວກເຈົ້າມີການເກີດໃ
ໝ່ໃນ ພຣະເຢຊູຄຣິດ ໂດຍທາງຂ່າວປະເສີດນັ້ນ
4:16 ຈັ່ງຊັ້ນ ຂ້ອຍຈັ່ງຂໍໃຫ້ພວກເຈົ້າດຳເນີນຕາມຢ່າງຂ້ອຍໄປ
4:17 ຍ້ອນເຫດນີ້ເອງ ຂ້ອຍຈັ່ງໃຊ້ ຕີໂມທຽວ ລູກທີ່ຮັກຂອງຂ້ອຍ ຊຶ່ງເປັນຜູ້ຈົງຮັກ-
ພັກດີໃນພຣະຜູ້ເປັນເຈົ້າ ມາຫາພວກເຈົ້າ ເພື່ອຊິເຕືອນຄວາມຈຳພວກເຈົ້າ ເຖິງ
ແບບຢ່າງຊີວິດຂອງຂ້ອຍໃນ ພຣະຄຣິດ ຕາມທີ່ຂ້ອຍໄດ້ສອນໃນຄູ່ກຸ່ມຜູ້ເຊື່ອຢູ່ຄູ່
ໝ້ອງ
4:18 ບັດນີ້ ໄດ້ມີຜູ້ລາງຄົນໃນໝູ່ພວກເຈົ້າທີ່ມີໃຈຜະຫຍອງ ມີທ່າທີ່ຄືກັບວ່າຂ້ອຍຊິ
ບໍ່ມາຫາພວກເຈົ້າ
4:19 ແຕ່ຄັ່ນພຣະຜູ້ເປັນເຈົ້າໂຜດໃຫ້ຂ້ອຍມາ ຂ້ອຍຊິມາຫາພວກເຈົ້າໃນໄວໆ ນີ້
ແລ້ວຊິໄດ້ຮູ້ຈັກຄວາມຈິງ ບໍ່ແມ່ນແຕ່ການຂີ້ຄຸຍຂອງຊຸມຄົນທີ່ຜະຫຍອງນັ້ນ ແຕ່ຊິ
ໄດ້ຮູ້ຈັກລິດຊາດກຳລັງທີ່ແທ້ຈິງຂອງເຂົາ
4:20 ຍ້ອນວ່າ ລາຊະອານາຈັກຂອງພຣະເຈົ້ານັ້ນບໍ່ແມ່ນແຕ່ເລື່ອງຄວາມເວົ້າຊື່ໆ
ແຕ່ເຕັມໄປດ້ວຍລິດທານຸພາບຂອງພຣະເຈົ້າ
4:21 ພວກເຈົ້າຊິເອົາຈັ່ງໃດກໍໃຫ້ເລືອກເອົາເບິ່ງ ຊິໃຫ້ຂ້ອຍຖືໄມ້ແສ້ມາຫາພວກ
ເຈົ້າ ຫລືວ່າຊິໃຫ້ຂ້ອຍມາດ້ວຍຄວາມຮັກກັບດ້ວຍໃຈອ່ອນນ້ອມ

## 1 ໂກຣິນໂທ ບົດທີ 5

5:1 ແລ້ວໄດ້ມີຂ່າວລືຕໍ່ກັນມາວ່າ ມີການຜິດປະເວນີໃນໝູ່ພວກເຈົ້າ ແລ້ວການຜິດ
ປະເວນີແນວນີ້ເຖິງແມ່ນໃນພວກຄົນຕ່າງຊາດກໍຍັງບໍ່ມີເລີຍ ຄືມີຄົນໜຶ່ງໄດ້ເອົາ
ກັນກັບເມຍຂອງພໍ່
5:2 ແລ້ວພວກເຈົ້າກໍຍັງຜະຫຍອງຢູ່ ແທນທີ່ຊິເປັນທຸກເປັນຮ້ອນຍ້ອນເລື່ອງນີ້
ເພື່ອຊິໄດ້ຕັດຄົນທີ່ເຮັດຜິດແນວນີ້ອອກຈາກໝູ່ພວກເຈົ້າໄປ

5:3 ແມ່ນວ່າໂຕຂ້ອຍບໍ່ໄດ້ຢູ່ກັບພວກເຈົ້າ ແຕ່ໃຈຂອງຂ້ອຍກໍຍັງຢູ່ນຳ ຂ້ອຍໄດ້
ຕັດສິນໂທດຄົນທີ່ໄດ້ເຮັດຜິດແນວນັ້ນຄືກັນກັບຂ້ອຍໄດ້ຢູ່ນຳ
5:4 ຄືໃນນາມຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ບັດພວກເຈົ້າມາຕຸ້ມ-
ໂຮມກັນ ຈິດວິນຍານຂອງຂ້ອຍກໍຊິຮ່ວມຢູ່ນຳ ພ້ອມທັງລິດອຳນາດຂອງ ພຣະເຢ-
ຊູຄຣິດ ພຣະຜູ້ເປັນເຈົ້າຂອງພວກເຮົານັ້ນ
5:5 ເພື່ອຊິໄດ້ຈັດການມອບຜູ້ຊາຍຄົນນັ້ນໄວ້ໃຫ້ ພະຍາມານ ຊາຕານທຳລາຍ
ເນື້ອໜັງຂອງເຂົາຊະ ເພື່ອຈິດວິນຍານຂອງເຂົາຊິໄດ້ພົ້ນໂທດໃນມື້ຂອງອົງ
ພຣະເຢຊູເຈົ້າ ນັ້ນ
5:6 ແລ້ວການທີ່ພວກເຈົ້າອວດກັນນັ້ນ ມັນບໍ່ດີຈັກໜ່ອຍເລີຍ ພວກເຈົ້າບໍ່ຮູ້ບໍ້ວ່າ
ເຊື້ອຟູແຄ່ໜ່ອຍດຽວມັນກໍເຮັດໃຫ້ແປ້ງເຂົ້າຈີ່ດິບຟູຂຶ້ນໝົດທັງກ້ອນ
5:7 ຈັ່ງຊັ້ນເນາະ ໃຫ້ຈັດການຊຳລະລາງເຊື້ອຟູເກົ່ານັ້ນໃຫ້ອອກໄປເດີ້ ເພື່ອພວກ
ເຈົ້າຊິໄດ້ເປັນແປ້ງເຂົ້າຈີ່ດິບກ້ອນໃໝ່ທີ່ບໍ່ມີເຊື້ອຟູເຈືອປົນຢູ່ເລີຍ ຍ້ອນວ່າ ພຣະ-
ຄຣິດ ຜູ້ເພິ່ນເປັນແກະຮັບບາບຂອງເຮົາ ເພິ່ນໄດ້ຖືກສະລະເປັນເຄື່ອງບູຊາເພື່ອ
ຄົນເຮົາແລ້ວ
5:8 ຈັ່ງຊັ້ນ ໃຫ້ເຮົາມີການລ້ຽງສະຫລອງມື້ນັ້ນ ບໍ່ແມ່ນສະຫລອງດ້ວຍເຊື້ອຟູເກົ່າ
ຫລືເຈືອປົນດ້ວຍເຊື້ອຟູຂອງຄວາມຊົ່ວຊ້າເລວຊາມ ແຕ່ດ້ວຍເຂົ້າຈີ່ທີ່ບໍ່ມີເຊື້ອຟູ
ຄືຄວາມຈິງໃຈກັບສັດຈະນັ້ນເນາະ
5:9 ຂ້ອຍໄດ້ຂຽນຈົດໝາຍເຖິງພວກເຈົ້າແລ້ວ ວ່າບໍ່ໃຫ້ຄົບກັບຄົນລ່ວງປະເວນີ
5:10 ແຕ່ຂ້ອຍບໍ່ໄດ້ໝາຍເຖິງ ຊາວໂລກທີ່ເປັນຄົນລ່ວງປະເວນີນັ້ນ ຫລືຄົນໂລບ
ຄົນຂີ້ໂກງ ຮ່ວມທັງຄົນຖືຮູບເຄົາລົບນັ້ນ ບໍ່ຊັ້ນພວກເຈົ້າກໍຊິຕ້ອງອອກຈາກໂລກ
ນີ້ໄປ ກວ່າຊິຫລີກລ້ຽງໃຫ້ໄດ້
5:11 ແຕ່ບັດນີ້ ຂ້ອຍຂຽນມາບອກພວກເຈົ້າວ່າ ຄັນມີຜູ້ໃດທີ່ເອີ້ນວ່າເປັນພີ່ນ້ອງກັນ
ແຕ່ຍັງລ່ວງປະເວນີ ເປັນຄົນຂີ້ໂລບ ເປັນຄົນຖືຮູບເຄົາລົບ ເປັນຄົນປາກຮ້າຍ
ເປັນຄົນຂີ້ເມົາ ຫລືເປັນຄົນຂີ້ໂກງ ກໍຢ່າຄົບກັບຄົນແນວນັ້ນ ແມ່ນແຕ່ຊິຮ່ວມພາ
ກິນນຳກັນກໍຢ່າເຮັດເລີຍ

5:12 ຄືເຮົາບໍ່ມີໜ້າທີ່ທີ່ຊິຕັດສິນຄົນພາຍນອກດອກ ແຕ່ວ່າພວກເຈົ້າກໍຍັງມີໜ້າທີ່
ຕັດສິນຄົນພາຍໃນບໍ່ແມ່ນບໍ້
5:13 ແຕ່ສ່ວນຄົນພາຍນອກນັ້ນ ພຣະເຈົ້າກໍຊິຕັດສິນລົງໂທດເຂົາເອງ ແຕ່ວ່າສ່ວນ
ຄົນຊົ່ວຊ້າທີ່ຢູ່ໃນໝູ່ພວກເຈົ້ານັ້ນ ກໍໃຫ້ຈັດການໃຫ້ອອກໄປຊະ

# 1 ໂກຣິນໂທ ບົດທີ 6

6:1 ໃນໝູ່ພວກເຈົ້າຊິມີຜູ້ໃດຢູ່ບໍ້ ບັດຍາມມີເລື່ອງມີຮາວກັບພີ່ນ້ອງຄົນອື່ນໆ ກ້າ
ອອກໄປເວົ້າຄວາມກັນຕໍ່ໜ້າຄົນບໍ່ຊອບທຳທາງໂລກ ແທນທີ່ຊິເວົ້າຄວາມກັນຕໍ່
ໜ້າພີ່ນ້ອງຄົນຂອງພຣະເຈົ້າ
6:2 ພວກເຈົ້າບໍ່ຮູ້ບໍ້ ວ່າພີ່ນ້ອງຄົນຂອງພຣະເຈົ້າຊິພິພາກສາໂລກ ກັບຄັ່ນວ່າພວກ
ເຈົ້າຊິພິພາກສາໂລກແລ້ວ ເປັນຫຍັງພວກເຈົ້າຊິບໍ່ສົມຄວນພິພາກສາເລື່ອງນ້ອຍ
ໆ ນ້ອຍໆ ແນວນີ້ບໍ້
6:3 ພວກເຈົ້າບໍ່ຮູ້ບໍ້ ວ່າພວກເຮົາຊິພິພາກສາໝູ່ເທວະທູດ ແລ້ວການຕັດສິນແນວ
ທາງຊີວິດນີ້ຈັ່ງເປັນເລື່ອງໃຫຍ່ສໍ່າໃດ
6:4 ຈັ່ງຊັ້ນ ຄັ່ນພວກເຈົ້າມີເລື່ອງມີຮາວກັນກ່ຽວກັບຊີວິດນີ້ ກໍໃຫ້ຕັ້ງຄົນໃນກຸ່ມຜູ້
ເຊື່ອທີ່ເປັນຜູ້ນ້ອຍໆ ແລ້ວໃຫ້ເຂົາຕັດສິນເອົາ ໂລດ
6:5 ຂ້ອຍເວົ້າຈັ່ງຊີ້ກໍເພື່ອໃຫ້ພວກເຈົ້າລະອາຍໃຈ ໃນພວກເຈົ້າບໍ່ມີຈັກຄົນບໍ້ ທີ່ມີ
ປັນຍາຕັດສິນຄວາມລະຫວ່າງພີ່ນ້ອງ
6:6 ແຕ່ເປັນຫຍັງ ພີ່ນ້ອງກັບພີ່ນ້ອງຕ້ອງໄປເວົ້າຄວາມກັນຕໍ່ໜ້າຄົນບໍ່ເຊື່ອຈັ່ງຊັ້ນບໍ້
6:7 ບັດພວກເຈົ້າໄປເວົ້າຄວາມກັນຈັ່ງຊີ້ ກໍເປັນການຜິດພາດໃຫຍ່ທີ່ບໍ່ສົມຄວນ
ເຮັດ ເປັນຫຍັງພວກເຈົ້າຄືບໍ່ທົນເອົາຕໍ່ຄວາມຜິດທີ່ເຂົາເຮັດໃຫ້ເຈົ້າ ຄືຍອມໃຫ້
ເຂົາໂກງ ໂລດ ຊິບໍ່ດີກວ່າບໍ້
6:8 ບໍ່ແລ້ວ ພວກເຈົ້າມັກເຮັດຜິດຕໍ່ກັນ ໂກງກັນໃນລະຫວ່າງພວກພີ່ນ້ອງ
6:9 ພວກເຈົ້າບໍ່ຮູ້ບໍ້ວ່າ ພວກຄົນຊົ່ວຊິບໍ່ໄດ້ຮັບລາຊະອານາຈັກຂອງພຣະເຈົ້າເປັນ
ນໍລະດົກເລີຍ ຢ່າຖືກຫລອກເດີ້ ຄືຄົນລ່ວງປະເວນີ ຄົນຖືຮູບເຄົາລົບ ຄົນຜິດຜົວ
ຜິດເມຍເຂົາ ຄົນຮັກຮ່ວມເພດ

6:10 ຄົນຂີ້ລັກ ຄົນຂີ້ໂລບ ຄົນຂີ້ເມົາ ຄົນປາກຮ້າຍ ກັບຄົນຂີ້ໂກງ ຄົນຈຳພວກນີ້ຊິບໍ່
ໄດ້ຮັບເຂົ້າລາຊະອານາຈັກຂອງພຣະເຈົ້າເປັນນໍລະດົກເລີຍ
6:11 ແລ້ວແຕ່ກ່ອນນັ້ນກໍມີຜູ້ລາງຄົນໃນພວກເຈົ້າທີ່ເປັນຈັ່ງຊັ້ນ ແຕ່ບັດນີ້ພວກເຈົ້າ
ໄດ້ຮັບການຊຳລະລາງ ກັບໄດ້ຮັບການແຍກຕັ້ງໄວ້ໃຫ້ບໍລິສຸດສະເພາະພຣະເຈົ້າ
ກັບໄດ້ຮັບການຮັບຮອງໄວ້ວ່າເປັນຄົນຊອບທຳຖືກຕ້ອງຕໍ່ໜ້າພຣະເຈົ້າ ໂດຍໃນ
ພຣະນາມຂອງ ພຣະເຢຊູເຈົ້າ ກັບໂດຍ ພຣະວິນຍານ ຂອງພຣະເຈົ້າຂອງພວກ
ເຮົາ
6:12 ຄືຂ້ອຍມີສິດເຮັດໄດ້ໝົດຄູ່ຢ່າງ ແຕ່ບໍ່ແມ່ນໝົດຄູ່ຢ່າງນັ້ນຊິເປັນແນວສົມຄວນ
ຂ້ອຍມີສິດເຮັດໄດ້ໝົດຄູ່ຢ່າງ ແຕ່ຂ້ອຍບໍ່ຍອມໃຫ້ມັນມີອຳນາດເໜືອຂ້ອຍເລີຍ
6:13 ແນວກິນມີໄວ້ເພື່ອທ້ອງ ກັບທ້ອງກໍມີໄວ້ເພື່ອແນວກິນ ແຕ່ວ່າມີມື້ໜຶ່ງທີ່ພຣະ-
ເຈົ້າກໍຊິໃຫ້ທັງສອງນັ້ນສູນສິ້ນໄປ ແລ້ວຮ່າງກາຍຂອງຄົນເຮົານັ້ນ ເພິ່ນບໍ່ໄດ້ສ້າງ
ໄວ້ເພື່ອການລ່ວງປະເວນີ ແຕ່ໄດ້ສ້າງໄວ້ສຳລັບການຖວາຍກຽດພຣະຜູ້ເປັນເຈົ້າ
ກັບພຣະຜູ້ເປັນເຈົ້າກໍຢູ່ເພື່ອຮ່າງກາຍ
6:14 ພຣະເຈົ້າຜູ້ເປັນພໍ່ໄດ້ບັນດານໃຫ້ພຣະຜູ້ເປັນ ພຣະບຸດ ນັ້ນເປັນຂຶ້ນມາຈາກ
ຕາຍ ແລ້ວໃນທຳນອງດຽວກັນ ເພິ່ນກໍຊິບັນດານໃຫ້ພວກເຮົາທັງຫລາຍເປັນຂຶ້ນ
ມາຈາກຕາຍຄືກັນໂດຍລິດທານຸພາບຂອງເພິ່ນ
6:15 ພວກເຈົ້າບໍ່ຮູ້ບໍ້ວ່າ ຮ່າງກາຍຂອງພວກເຈົ້າເປັນອະໄວຍະວະຂອງ ພຣະຄຣິດ
ບັດເປັນຈັ່ງຊັ້ນແລ້ວ ຊິໃຫ້ຂ້ອຍເອົາອະໄວຍະວະຂອງ ພຣະຄຣິດ ເຂົ້າເປັນອະ-
ໄວຍະວະກັນກັບແມ່ຍິງຫາກິນໄດ້ບໍ້ ຂໍຢ່າໃຫ້ເປັນຈັ່ງຊັ້ນເດັດຂາດເລີຍ
6:16 ຫລື ເຈົ້າບໍ່ຮູ້ບໍ້ວ່າ ຄົນທີ່ຜູກພັນກັບແມ່ຍິງຫາກິນກໍຊິຮ່ວມຮ່າງເປັນກາຍດຽວ
ກັນກັບແມ່ຍິງນັ້ນ ຕາມທີ່ເພິ່ນໄດ້ເວົ້າໄວ້ວ່າ “ເຂົາທັງສອງຊິໄດ້ເຂົ້າເປັນເລືອດ
ເນື້ອໜັງອັນດຽວກັນ”
6:17 ແຕ່ສ່ວນຄົນທີ່ຜູກພັນກັບພຣະຜູ້ເປັນເຈົ້າ ກໍເປັນອັນດຽວກັນກັບເພິ່ນຝ່າຍ
ຈິດວິນຍານ

6:18 ຈັ່ງຊັ້ນ ໃຫ້ຫລີກລ້ຽງຈາກການລ່ວງປະເວນີເດີ້ ຍ້ອນວ່າຄວາມບາບຢູ່ຢ່າງທີ່
ມະນຸດເຮັດນັ້ນກໍເປັນບາບພາຍນອກຮ່າງກາຍ ແຕ່ວ່າຄົນທີ່ລ່ວງປະເວນີນັ້ນໄດ້
ເຮັດຜິດຕໍ່ຮ່າງກາຍຂອງໂຕເອງ
6:19 ຫລື ເຈົ້າບໍ່ຮູ້ບໍ້ວ່າ ຮ່າງກາຍຂອງພວກເຈົ້າໄດ້ເປັນວິຫານຂອງ ພຣະວິນຍານ
ບໍລິສຸດ ຊຶ່ງສະຖິດຢູ່ໃນພວກເຈົ້າແລ້ວ ຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ແລ້ວ
ເຈົ້າຈັ່ງບໍ່ແມ່ນໂຕເອງດອກ
6:20 ຍ້ອນວ່າ ພຣະເຈົ້າໄດ້ຊື້ພວກເຈົ້າໄວ້ແລ້ວໂດຍລາຄາສູງ ຈັ່ງຊັ້ນກໍໃຫ້ພວກ
ເຈົ້າຖວາຍພຣະກຽດແດ່ພຣະເຈົ້າດ້ວຍຮ່າງກາຍຂອງໂຕເຈົ້າເອງເດີ້ ກັບດ້ວຍ
ຈິດວິນຍານຂອງເຈົ້ານຳ ຊຶ່ງທັງສອງນັ້ນເປັນຂອງພຣະເຈົ້າແລ້ວ

## 1 ໂກຣິນໂທ ບົດທີ 7

7:1 ແລ້ວບັດນີ້ ສຳລັບເລື່ອງນັ້ນທີ່ພວກເຈົ້າຂຽນໄປເຖິງຂ້ອຍ ຂໍຕອບວ່າມັນເປັນ
ການດີແລ້ວທີ່ຜູ້ຊາຍຊິບໍ່ຊູນບໍ່ບາຍແມ່ຍິງເລີຍ
7:2 ແຕ່ຈັ່ງໃດກໍຕາມ ໃຫ້ຜູ້ຊາຍຄູ່ຄົນມີເມຍເປັນຂອງໂຕເອງເດີ້ ເພື່ອປ້ອງກັນໄວ້ບໍ່
ໃຫ້ມີການລ່ວງປະເວນີ ແລ້ວກໍໃຫ້ແມ່ຍິງຄູ່ຄົນມີຜົວເປັນຂອງໂຕເອງນຳ
7:3 ຝ່າຍຜູ້ເປັນຜົວ ສົມຄວນທີ່ຊິສະແດງຄວາມເມດຕາອາລີຕໍ່ເມຍຂອງໂຕ ກັບຂໍ
ໃຫ້ເມຍເຮັດຄືກັນຕໍ່ຜົວນຳ
7:4 ຝ່າຍຜູ້ເປັນເມຍນັ້ນ ກໍບໍ່ມີສິດເໜືອຮ່າງກາຍຂອງໂຕເອງ ແຕ່ຜົວມີສິດເໜືອ
ຮ່າງກາຍຂອງເຂົາ ແລ້ວໃນທຳນອງດຽວກັນ ຝ່າຍຜູ້ເປັນຜົວກໍບໍ່ມີສິດເໜືອຮ່າງ-
ກາຍຂອງໂຕເອງ ແຕ່ເມຍມີສິດເໜືອຮ່າງກາຍຂອງເຂົາ
7:5 ຄືຢ່າປະຕິເສດກັນແລະກັນໃນການຢູ່ນຳກັນ ເວັ້ນແຕ່ວ່າໄດ້ຕົກລົງກັນໄວ້ກ່ອນ
ຊົ່ວລະຍະໜຶ່ງ ເພື່ອຊິຖວາຍໂຕໃນການຖືອົດອາຫານ ກັບການອະທິຖານຕໍ່ພຣະ-
ເຈົ້າ ແລ້ວຈັ່ງຄ່ອຍມາຮ່ວມກັນອີກ ເພື່ອຊິບໍ່ເປີດໂອກາດໃຫ້ ພະຍາມານ ຊາຕານ
ຊັກຈູງໃຫ້ຫລົງຜິດໃນການຄວບຄຸມໂຕເອງ
7:6 ແຕ່ທີ່ຂ້ອຍວ່າຈັ່ງຊີ້ກໍເປັນຂໍ້ສະເໜີຊື່ໆ ບໍ່ແມ່ນເປັນຄຳສັ່ງ
7:7 ຄືຄັ່ນເປັນໄດ້ ຂ້ອຍຢາກໃຫ້ຄູ່ຄົນຢູ່ເປັນໂສດຄືກັນກັບຂ້ອຍນີ້ ແຕ່ວ່າຄູ່ຄົນກໍມີ
ພົນສະຫວັນພິເສດຈາກພຣະເຈົ້າ ຕ່າງຄົນຕ່າງບໍ່ຄືກັນ

7:8 ຈັ່ງຊັ້ນ ຂ້ອຍຂໍເວົ້າກັບຄົນທີ່ຍັງເປັນໂສດຢູ່ກັບພວກແມ່ຍິງທີ່ເປັນໝ້າຍ ວ່າ
ການທີ່ຊິຢູ່ຈັ່ງຂ້ອຍນີ້ກໍເປັນການດີແລ້ວ
7:9 ແຕ່ວ່າ ຄັ່ນເຂົາບໍ່ສາມາດອົດໄດ້ ກໍໃຫ້ແຕ່ງງານຊະ ຍ້ອນວ່າການທີ່ຊິແຕ່ງງານ
ນັ້ນກໍດີກວ່າມີໃຈຮ້ອນຮົນດ້ວຍຄວາມຢາກ
7:10 ແລ້ວສຳລັບຜູ້ທີ່ແຕ່ງງານແລ້ວນັ້ນ ຂ້ອຍຂໍສັ່ງວ່າ ຊຶ່ງບໍ່ແມ່ນຂ້ອຍເປັນຜູ້ສັ່ງ
ເອົາເອງ ແຕ່ພຣະຜູ້ເປັນເຈົ້າເພິ່ນເປັນຜູ້ສັ່ງໄວ້ວ່າ ສ່ວນຜູ້ເປັນເມຍກໍບໍ່ໃຫ້ຢ່າຈາກ
ຜົວຂອງໂຕເອງ
7:11 ແຕ່ຄັ່ນແມ່ນນາງໄດ້ຢ່າຈາກຜົວໂຕເອງໄປແລ້ວ ກໍໃຫ້ນາງນັ້ນຢູ່ຢ່າງເປັນ
ໂສດ ບໍ່ໃຫ້ມີຜົວໃໝ່ອີກ ຫລືບໍ່ ກໍໃຫ້ນາງກັບມາຄືນດີກັນກັບຜົວເກົ່າ ແລ້ວສຳລັບ
ຜູ້ເປັນຜົວ ກໍບໍ່ໃຫ້ເຂົາປະຖິ້ມເມຍໂຕເອງຄືກັນ
7:12 ແລ້ວສ່ວນຄົນອື່ນໆ ຂ້ອຍຂໍເວົ້າເອງ ບໍ່ແມ່ນພຣະຜູ້ເປັນເຈົ້າເວົ້າ ວ່າຄັ່ນພີ່-
ນ້ອງຄົນໃດມີເມຍທີ່ບໍ່ໄດ້ຮັບເຊື່ອໃນພຣະເຈົ້າ ແລ້ວຄັ່ນເມຍຜູ້ບໍ່ໄດ້ຮັບເຊື່ອນັ້ນ
ພໍໃຈທີ່ຊິຢູ່ກັບຜົວຜູ້ທີ່ຮັບເຊື່ອ ກໍຢ່າໃຫ້ຜົວນັ້ນປະກັນກັບເຂົາເລີຍເດີ້
7:13 ແລ້ວຄັ່ນແມ່ຍິງຄົນໃດມີຜົວທີ່ບໍ່ໄດ້ຮັບເຊື່ອ ຄັ່ນນາຍຜູ້ເປັນຜົວພໍໃຈທີ່ຊິຢູ່ກັບ
ເມຍຜູ້ທີ່ຮັບເຊື່ອ ກໍຢ່າໃຫ້ນາງຜູ້ນັ້ນປະກັນກັບເຂົາເລີຍເດີ້
7:14 ຍ້ອນວ່າ ຝ່າຍຜົວຜູ້ທີ່ບໍ່ຮັບເຊື່ອນັ້ນ ກໍໄດ້ຮັບການແຍກໄວ້ສະເພາະພຣະເຈົ້າ
ແລ້ວຍ້ອນເມຍໂຕເອງ ແລ້ວຝ່າຍເມຍຜູ້ທີ່ບໍ່ຮັບເຊື່ອນັ້ນ ກໍໄດ້ຮັບການແຍກໄວ້
ສະເພາະພຣະເຈົ້າແລ້ວຍ້ອນຜົວໂຕເອງຄືກັນ ຄັ່ນບໍ່ຊັ້ນລູກໆ ຂອງພວກເຈົ້າກໍ
ເປັນມົນທິນ ແຕ່ບັດນີ້ລູກໆ ຂອງພວກເຈົ້າກໍເປັນຜູ້ບໍລິສຸດສະເພາະພຣະເຈົ້າ
ແລ້ວ
7:15 ແຕ່ວ່າ ຄັ່ນຜູ້ທີ່ບໍ່ເຊື່ອຊິແຍກໂຕໜີຈາກໄປ ກໍປ່ອຍໃຫ້ເຂົາໄປຊະ ເລື່ອງຈັ່ງຊີ້ບໍ່
ຈຳເປັນທີ່ພີ່ນ້ອງຊາຍຍິງຜູ້ຢູ່ໃນພຣະເຈົ້າ ຊິຕ້ອງຖືກຜູກມັດໄວ້ໃຫ້ຈຳໃຈຢູ່ນຳກັນ
ດອກ ຄືພຣະເຈົ້າໄດ້ເອີ້ນເຮົາໃຫ້ຢູ່ກັນຢ່າງສະຫງົບສຸກ
7:16 ໂອ້ ເຈົ້າຜູ້ເປັນເມຍ ເອີຍ ເຈົ້າບໍ່ຮູ້ບໍ້ວ່າ ເຈົ້າ ອາດ ຊິມີສ່ວນຊ່ອຍຜົວໃຫ້ລອດ-
ພົ້ນໄດ້ ກັບເຈົ້າຜູ້ເປັນຜົວ ເອີຍ ເຈົ້າບໍ່ຮູ້ບໍ້ວ່າ ເຈົ້າ ອາດ ຊິມີສ່ວນຊ່ອຍເມຍໃຫ້
ລອດພົ້ນໄດ້ຄືກັນ

7:17 ແຕ່ຈັ່ງໃດກໍຕາມ ພຣະເຈົ້າເພິ່ນໄດ້ກໍານົດໃຫ້ແຕ່ລະຄົນຢູ່ແບວໃດ ກໍໃຫ້ໃຊ້
ຊີວິດຢູ່ຈັ່ງຊັ້ນ ຕາມທີ່ພຣະຜູ້ເປັນເຈົ້າໄດ້ເອີ້ນຄູ່ຄົນມາ ຄໍາສັ່ງຂໍ້ນີ້ຂ້ອຍໄດ້ຕັ້ງໄວ້
ໃຫ້ພີ່ນ້ອງກຸ່ມຜູ້ເຊື່ອໝົດຄູ່ໝ້ອງ
7:18 ມີຜູ້ຊາຍຄົນໃດບໍ້ ທີ່ພຣະເຈົ້າເອີ້ນມາທີ່ໄດ້ເຂົ້າພິທີຕັດແລ້ວ ກໍຢ່າໃຫ້ເຂົາຄຶດ-
ຢາກເປັນຄືກັນກັບຄົນທີ່ຍັງບໍ່ເຂົ້າພິທີຕັດເລີຍ ຫລືວ່າມີຜູ້ຊາຍຄົນໃດບໍ້ ທີ່ພຣະ-
ເຈົ້າເອີ້ນມາທີ່ບໍ່ໄດ້ເຂົ້າພິທີຕັດ ກໍຢ່າໃຫ້ເຂົາຄຶດ ຢາກເປັນຄືກັນກັບຄົນທີ່ເຂົ້າພິ-
ທີຕັດດອກ
7:19 ຄືການເຂົ້າພິທີຕັດ ຫລືບໍ່ເຂົ້າພິທີຕັດກໍບໍ່ແມ່ນແນວສໍາຄັນອິຫຍັງດອກ ແຕ່ວ່າ
ການໃຊ້ຊີວິດຕາມ ພຣະຄໍາ ຂອງພຣະເຈົ້າເປັນແນວສໍາຄັນອິຫລີ
7:20 ຂໍໃຫ້ຄູ່ຄົນໃຊ້ຊີວິດຕາມຄວາມເປັນຢູ່ເດີມ ທີ່ເປັນຢູ່ຕອນພຣະເຈົ້າໄດ້ເອີ້ນໄດ້
ເຊີນມານັ້ນ
7:21 ຄືພຣະເຈົ້າໄດ້ເອີ້ນໄດ້ເຊີນເຈົ້າມາຕອນຍັງເປັນຂ້າທາດຢູ່ບໍ້ ກໍຢ່າໃຫ້ວຸ້ນວາຍ
ຫລາຍໃນການເປັນຂ້າທາດນັ້ນ ແຕ່ຄັ່ນເຈົ້າສາມາດເປັນອິດສະຫລະໄດ້ກໍຊິດີກ-
ວ່າ
7:22 ຍ້ອນຜູ້ໃດທີ່ພຣະຜູ້ເປັນເຈົ້າໄດ້ເອີ້ນໄດ້ເຊີນມາຕອນເປັນຂ້າທາດ ຜູ້ນັ້ນໄດ້
ເປັນຄົນເສລີໃນພຣະຜູ້ເປັນເຈົ້າຢູ່ແລ້ວ ແລ້ວໃນທໍານອງດຽວກັນ ຄົນທີ່ຮັບການ
ເອີ້ນການເຊີນມາຕອນເປັນຄົນເສລີ ຄົນນັ້ນກໍຍັງເປັນຂ້າທາດຮັບໃຊ້ຂອງ ພຣະ-
ຄຣິດ
7:23 ຄືພຣະເຈົ້າເພິ່ນໄດ້ຊື້ພວກເຈົ້າໄວ້ໂດຍລາຄາສູງແລ້ວ ຈັ່ງຊັ້ນຢ່າໃຫ້ເປັນຂ້າ-
ທາດຂອງມະນຸດເລີຍເດີ້
7:24 ຈັ່ງຊັ້ນ ພີ່ນ້ອງທັງຫລາຍ ເອີຍ ຂໍໃຫ້ຄູ່ຄົນໃຊ້ຊີວິດຕາມສະພາບຄວາມເປັນຢູ່
ອັນເດີມນັ້ນ ທີ່ເປັນຢູ່ຕອນພຣະເຈົ້າໄດ້ເອີ້ນໄດ້ເຊີນມານັ້ນເດີ້
7:25 ບັດນີ້ ສໍາລັບພວກສາວພົມມະຈາລີນັ້ນ ຂ້ອຍບໍ່ມີຄໍາສັ່ງພິເສດອິຫຍັງຈາກ
ພຣະຜູ້ເປັນເຈົ້າເລີຍ ແຕ່ຂ້ອຍຂໍອອກຄວາມຄຶດເຫັນໃນຖານະທີ່ເປັນຜູ້ຊຶ່ງໄດ້ຮັບ
ຄວາມເມດຕາຈາກພຣະຜູ້ເປັນເຈົ້າ ໃຫ້ເປັນຜູ້ທີ່ໄວ້ໃຈໄດ້

7:26 ຈັ່ງຊັ້ນ ຍ້ອນເຫດການອັນຫຍຸ້ງຍາກລຳບາກທີ່ມີຢູ່ໃນຍາມນີ້ ຂ້ອຍເຫັນວ່າ
ມັນຊິເປັນການດີຄັ່ນຄູ່ຄົນຊິຢູ່ໃນສະພາບຢ່າງທີ່ເຂົາເປັນຢູ່ນີ້
7:27 ເຈົ້າມີເມຍແລ້ວບໍ້ ກໍຢ່າສູ່ປະກັນກັນເລີຍ ເຈົ້າຍັງບໍ່ທັນແຕ່ງບໍ້ ກໍຢ່າຫາເມຍ
ເລີຍ
7:28 ແຕ່ຄັ່ນເຈົ້າຊິເອົາເມຍ ເຈົ້າກໍບໍ່ມີຄວາມຜິດດອກ ກັບຄັ່ນວ່າສາວພົມມະຈາລີຊິ
ເອົາຜົວນາງກໍບໍ່ມີຄວາມຜິດຄືກັນ ຈັ່ງໃດກໍຕາມ ຄົນທີ່ເອົາຜົວເອົາເມຍນັ້ນ ຄືຊິພໍ້
ກັບຄວາມຫຍຸ້ງຍາກລຳບາກຝ່າຍເນື້ອໜັງຕາມໂລກນີ້ ແລ້ວຂ້ອຍຢາກຊິໃຫ້ພວກ
ເຈົ້າຫວີດພົ້ນຈາກຄວາມຫຍຸ້ງຍາກນັ້ນ
7:29 ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍວ່າຍາມເວລາຂອງຍຸກນີ້ກໍສັ້ນເຂົ້າຫລາຍ
ແລ້ວ ແຕ່ນີ້ໄປສ່ວນຜູ້ທີ່ມີເມຍແລ້ວ ຄວນຢູ່ຢ່າງບໍ່ມີເມຍ
7:30 ແລ້ວສ່ວນຜູ້ທີ່ຮ້ອງໄຫ້ ຄວນຊິຢູ່ຢ່າງບໍ່ມີແນວທີ່ຊິຕ້ອງຮ້ອງໄຫ້ ສ່ວນຜູ້ທີ່ຊົມ-
ຊື່ນຍິນດີ ຄວນຊິຢູ່ຢ່າງບໍ່ມີແນວທີ່ຊິຊົມຊື່ນຍິນດີ ສ່ວນຜູ້ທີ່ຫາຊື້ຂອງມາ ຄວນຊິຢູ່
ຢ່າງບໍ່ມີອີຫຍັງເລີຍ
7:31 ກັບຄົນທີ່ອາໄສທາງໂລກນີ້ ຄວນຊິຢູ່ຢ່າງຮູ້ຈັກໃຊ້ສອຍ ຍ້ອນລະບົບຄ່ານິຍົມ
ຂອງໂລກນີ້ພວມຊິລ່ວງໄປແລ້ວ
7:32 ແຕ່ຂ້ອຍຢາກໃຫ້ພວກເຈົ້າຢູ່ຢ່າງບໍ່ມີຄວາມກັງວົນ ຄືຜູ້ທີ່ບໍ່ມີເມຍ ເຂົາກໍມີ
ເວລາທີ່ຊິເອົາໃຈໃສ່ໃນວຽກງານຂອງພຣະຜູ້ເປັນເຈົ້າ ເພື່ອຊິໄດ້ເຮັດໃນແນວທີ່
ພຣະຜູ້ເປັນເຈົ້າເຫັນດີນຳ
7:33 ແຕ່ຝ່າຍຜູ້ທີ່ມີເມຍແລ້ວນັ້ນ ເຂົາກໍມີຄວາມກັງວົນໃນແນວຕ່າງໆ ທາງໂລກນີ້
ຄືໃນແນວທີ່ຊິຖືກໃຈເມຍຂອງເຂົາ
7:34 ຄືສຳລັບຜູ້ທີ່ເປັນເມຍ ກໍແຕກຕ່າງກັນກັບສາວພົມມະຈາລີ ຄືຝ່າຍສາວຜູ້ຍັງບໍ່
ທັນມີຜົວ ເຂົາກໍມີເວລາເອົາໃຈໃສ່ໃນວຽກງານຂອງພຣະຜູ້ເປັນເຈົ້າ ເພື່ອເຂົາຊິ
ໄດ້ເປັນຄົນບໍລິສຸດທັງກາຍກັບຈິດວິນຍານ ແຕ່ຝ່າຍຜູ້ທີ່ມີຜົວແລ້ວນັ້ນ ເຂົາກໍມີ
ຄວາມກັງວົນໃນແນວຕ່າງໆ ທາງໂລກນີ້ ຄືໃນແນວທີ່ຊິຖືກໃຈຜົວຂອງເຂົາ
7:35 ຂ້ອຍເວົ້າຈັ່ງຊີ້ກໍເພື່ອເປັນຜົນປະໂຫຍດຂອງພວກເຈົ້າເອງ ບໍ່ແມ່ນຂ້ອຍຢາກ
ຊິເອົາແນວມາຄ້ອງຄໍພວກເຈົ້າໄວ້ດອກ ແຕ່ເວົ້າເພື່ອໃຫ້ເປັນຄວາມເໝາະສົມ

ງົດງາມ ເພື່ອໃຫ້ພວກເຈົ້າໄດ້ຮັບໃຊ້ພຣະຜູ້ເປັນເຈົ້າໂດຍບໍ່ຕ້ອງກັງວົນ ມີໃຈສອງ
ຝັກສອງຝ່າຍເລີຍ
7:36 ແຕ່ຄັນຜູ້ຊາຍຄົນໃດຢ້ານວ່າໂຕເອງ ອາດ ຊິວາງໂຕຢ່າງບໍ່ເໝາະສົມຕໍ່ສາວ
ພົມມະຈາລີທີ່ຮັກຂອງເຂົາ ກັບຄັນແມ່ຍິງຄົນນັ້ນພວມຊິຜ່ານໄວໜຸ່ມສາວແລ້ວ ກໍ
ໃຫ້ເຂົາພິຈາລະນາເອົາເອງເຮັດຕາມທີ່ປາດຖະໜາ ໃຫ້ເຂົາແຕ່ງເອົາ ໂລດ ກໍໄດ້
ມັນກໍບໍ່ຜິດດອກ
7:37 ຈັ່ງໃດກໍຕາມ ຜູ້ຊາຍຜູ້ທີ່ສາມາດຢືນຢູ່ຢ່າງໝັ້ນຄົງໄດ້ ກໍບໍ່ຈຳເປັນທີ່ຊິຕ້ອງ
ແຕ່ງກໍໄດ້ ຄືເຂົາສາມາດທີ່ຊິຫັກຫ້າມໃຈໂຕເອງໄດ້ ແລ້ວໄດ້ຕັດສິນໃຈວ່າຊິໃຫ້
ແມ່ຍິງຂອງເຂົາເປັນພົມມະຈາລີຕໍ່ໄປ ທີ່ເຂົາເຮັດຈັ່ງຊັ້ນກໍເປັນການດີແລ້ວ
7:38 ຈັ່ງຊັ້ນຜູ້ຊາຍຜູ້ທີ່ພາແມ່ຍິງນັ້ນເຂົ້າແຕ່ງງານກໍເຮັດດີຢູ່ ແຕ່ຄັນບໍ່ພາແຕ່ງກໍ
ແຮງເຮັດດີກວ່າອີກ
7:39 ແລ້ວຕາມກົດໝາຍໃນການແຕ່ງງານນັ້ນ ຜູ້ເປັນເມຍກໍຕ້ອງຢູ່ກັບຜົວຍາມເຂົາ
ຍັງມີຊີວິດຢູ່ ແຕ່ຄັນຜົວຕາຍ ນາງຜູ້ນັ້ນກໍຊິເປັນອິດສະຫລະ ມີສິດແຕ່ງງານກັບ
ຜູ້ຊາຍຜູ້ໃດກໍໄດ້ຕາມໃຈມັກ ຄືຜູ້ຊາຍທີ່ເຊື່ອໃນພຣະຜູ້ເປັນເຈົ້າເທົ່ານັ້ນ
7:40 ແຕ່ຂ້ອຍວ່າ ຄັນນາງຜູ້ນັ້ນຊິຢູ່ເປັນໂສດເຂົາກໍຊິເປັນສຸກກວ່າໄປແຕ່ງໃໝ່
ແລ້ວຂ້ອຍວ່າ ພຣະວິນຍານ ຂອງພຣະເຈົ້າໄດ້ເຫັນດີກັບຂ້ອຍນຳ

## 1 ໂກຣິນໂທ ບົດທີ 8

8:1 ແລ້ວບັດນີ້ ເລື່ອງການກິນນັ້ນທີ່ເຂົາເຄີຍບູຊາຕໍ່ຮູບເຄົາລົບ ພວກເຮົາຍອມຮັບ
ກັນຢູ່ແລ້ວວ່າ ເຮົາຕ່າງກໍມີຄວາມຮູ້ ແລ້ວຄວາມຮູ້ນັ້ນກໍເຮັດໃຫ້ເກີດຜະຫຍອງໄດ້
ແຕ່ວ່າຄວາມຮັກແບບຂອງພຣະເຈົ້າ ມີແຕ່ເສີມສ້າງກັນຂຶ້ນ
8:2 ແລ້ວຄັນຜູ້ໃດຖືວ່າໂຕເອງຮູ້ຈັກອີຫຍັງແລ້ວ ຜູ້ນັ້ນກໍຍັງຮູ້ທີ່ບໍ່ເຖິງສະພາບການ
ຢ່າງທີ່ໂຕເອງຄວນຊິຮູ້
8:3 ແຕ່ຄັນຜູ້ໃດຮັກແພງພຣະເຈົ້າ ພຣະເຈົ້າກໍຮູ້ຈັກກັບຜູ້ນັ້ນນຳ
8:4 ຈັ່ງຊັ້ນ ເລື່ອງການທີ່ເຮົາຊິກິນແນວທີ່ເຂົາໄດ້ບູຊາຕໍ່ຮູບເຄົາລົບ ພວກເຮົາກໍຮູ້ຢູ່
ແລ້ວວ່າ ຮູບເຄົາລົບນັ້ນບໍ່ເປັນສາລະອີຫຍັງຈັກດີ້ທາງໂລກນີ້ ກັບພວກເຮົາຮູ້

ອີກວ່າ ບໍ່ມີພຣະເຈົ້າອົງອື່ນໆ ນອກຈາກພຣະເຈົ້າຜູ້ທ່ຽງແທ້ອົງດຽວຂອງພວກ
ເຮົາ
8:5 ເຖິງແມ່ນວ່າຊິມີແນວຕ່າງໆ ທີ່ເຂົາເອີ້ນກັນວ່າເປັນພະເປັນເຈົ້າ ບໍ່ວ່າເຂົາຊິຫາ
ວ່າຢູ່ເທິງສະຫວັນກໍດີ ຫລືຢູ່ໃນແຜ່ນດິນໂລກນີ້ກໍຕາມ (ຄືມີຫລາຍພະຫລາຍເຈົ້າ
ແທ້)
8:6 ແຕ່ສຳລັບພວກເຮົາ ມີແຕ່ພຣະເຈົ້າອົງດຽວນີ້ ຜູ້ເພິ່ນເປັນພໍ່ທີ່ໄດ້ສ້າງໃຫ້ໝົດຄູ່
ອັນຄູ່ແນວບັງເກີດຂຶ້ນມານັ້ນ ແລ້ວພວກເຮົາໄດ້ຢູ່ໃນເພິ່ນນຳ ກັບເຮົາມີພຣະເຢ-
ຊູຄຣິດເຈົ້າອົງດຽວ ຜູ້ຊຶ່ງຄູ່ແນວນັ້ນໄດ້ເປັນຂຶ້ນມາ ກັບພວກເຮົາກໍມີຊີວິດໂດຍ
ເພິ່ນນຳ
8:7 ແຕ່ວ່າ ບໍ່ແມ່ນພີ່ນ້ອງຄູ່ຄົນທີ່ຊິມີຄວາມຮູ້ຄວາມເຂົ້າໃຈຈັ່ງຊີ້ ຍ້ອນວ່າຍັງມີພີ່-
ນ້ອງຜູ້ລາງຄົນທີ່ຝືນໃຈກິນລົງໄປ ດ້ວຍຈິດສຳນຶກຜິດຖືກຂອງເຂົາຍັງຖືກັນວ່າ
ຮູບເຄົາລົບນັ້ນເປັນພະເປັນເຈົ້າອີຫລີ ຄືຈິດສຳນຶກຜິດຖືກຂອງເຂົາຍັງອ່ອນຢູ່ຈົນ
ຮອດຄູ່ມື້ນີ້ ການກິນນັ້ນຈັ່ງເປັນມົນທິນໃຫ້ເຂົາ
8:8 ແຕ່ວ່າເລື່ອງການກິນນັ້ນ ບໍ່ໄດ້ໂປດປານໃຫ້ເຮົາເປັນພິເສດອີຫຍັງຕໍ່ພຣະເຈົ້າ
ດອກ ຄືຄັ່ນພວກເຮົາກິນເຮົາກໍບໍ່ມີອີຫຍັງດີຂຶ້ນ ແລ້ວຄັ່ນເຮົາບໍ່ໄດ້ກິນເຮົາບໍ່ໄດ້ມີ
ອີຫຍັງຮ້າຍກວ່າເກົ່າ
8:9 ແຕ່ໃຫ້ລະວັງເດີ້ ຄືຢ່າໃຫ້ເສລີພາບຂອງເຈົ້ານີ້ ກາຍເປັນຕົ້ນເຫດໃຫ້ພີ່ນ້ອງຜູ້
ທີ່ມີຄວາມເຊື່ອອ່ອນ ສະດຸດຫລົງຜິດໄປ
8:10 ຍ້ອນວ່າ ຄັ່ນພີ່ນ້ອງຜູ້ໃດໄດ້ເຫັນເຈົ້າ ຜູ້ທີ່ມີຄວາມຮູ້ໃນເລື່ອງນີ້ ນັ່ງລົງກິນຢູ່-
ໃນວິຫານຂອງຮູບເຄົາລົບນັ້ນ ແລ້ວຈິດສຳນຶກຜິດຖືກທີ່ຍັງອ່ອນຂອງເຂົາຊິບໍ່
ເຫີມຂຶ້ນບໍ້ ເລີຍເຮັດໃຫ້ເຂົາຝືນໃຈກິນຂອງທີ່ໄດ້ຖືກ ບູຊາຕໍ່ຮູບເຄົາລົບນັ້ນຄືກັນ
8:11 ແລ້ວຍ້ອນຄວາມຮູ້ຂອງເຈົ້າເປັນເຫດ ຄວາມເຊື່ອຂອງພີ່ນ້ອງຜູ້ທີ່ຍັງອ່ອນ ກໍ
ເລີຍຕ້ອງຖືກທຳລາຍ ຄືຜູ້ຊຶ່ງ ພຣະຄຣິດ ໄດ້ຍອມຕາຍແທນນັ້ນ
8:12 ບັດເຈົ້າເຮັດຜິດຕໍ່ພວກພີ່ນ້ອງໃນພຣະເຈົ້າແນວນັ້ນ ຈັ່ງເຮັດຮ້າຍຈິດສຳນຶກ
ຜິດຖືກທີ່ຍັງອ່ອນຂອງເຂົາ ເຈົ້າໄດ້ເຮັດບາບຕໍ່ ພຣະຄຣິດ ຄືກັນ

8:13 ຈັ່ງຊັ້ນ ສ່ວນຂ້ອຍນີ້ ຄັນແນວກິນເປັນສາເຫດໃຫ້ພີ່ນ້ອງຂອງຂ້ອຍຕ້ອງສະ-
ດຸດໃຈລົ້ມລົງໄປ ຂ້ອຍຊິບໍ່ກິນເນື້ອສັດໃນຍາມນີ້ຕໍ່ໄປອີກເລີຍ ຢ້ານວ່າຂ້ອຍ
ອາດ ຊິເຮັດໃຫ້ພີ່ນ້ອງຂອງຂ້ອຍນັ້ນ ຕ້ອງສະດຸດໃຈລົ້ມລົງໄປ

# 1 ໂກຣິນໂທ ບົດທີ 9

9:1 ຂ້ອຍບໍ່ໄດ້ເປັນທູດພິເສດບໍ້ ຂ້ອຍບໍ່ໄດ້ມີເສລີພາບບໍ້ ຂ້ອຍບໍ່ໄດ້ເຫັນພຣະເຢຊູ-
ຄຣິດເຈົ້າຂອງພວກເຮົາບໍ້ ແລ້ວພວກເຈົ້າບໍ່ໄດ້ເປັນຜົນງານຂອງຂ້ອຍໃນພຣະຜູ້-
ເປັນເຈົ້າບໍ້
9:2 ຄັນແມ່ນຂ້ອຍບໍ່ໄດ້ເປັນທູດພິເສດຂອງຄົນອື່ນໆ ຂ້ອຍກໍຍັງເປັນທູດພິເສດ
ຂອງພວກເຈົ້າ ຍ້ອນວ່າພວກເຈົ້າຄືຕາປະທັບຮັບຮອງຕຳແໜ່ງທູດພິເສດຂອງ
ຂ້ອຍໃນພຣະຜູ້ເປັນເຈົ້າຢູ່ແລ້ວ
9:3 ສ່ວນຜູ້ໃດທີ່ຊິກວດສອບຫາຈັບຜິດຂ້ອຍ ຂ້ອຍກໍຊິໂຕ້ຕອບເຂົາວ່າ
9:4 ພວກເຮົາບໍ່ມີສິດທີ່ຊິກິນຊິດື່ມຄືກັນບໍ້
9:5 ແລ້ວພວກເຮົາບໍ່ມີສິດທີ່ຊິພາເມຍຜູ້ທີ່ເຊື່ອ ຫລືພາພີ່ນ້ອງມານຳບໍ້ ຄືກັນກັບທີ່
ທູດພິເສດຄົນອື່ນໆ ກັບພວກນ້ອງຊາຍຂອງພຣະຜູ້ເປັນເຈົ້າໄດ້ເຮັດ ຮ່ວມທັງ ເກ-
ຟາ ນຳ
9:6 ແມ່ນມີແຕ່ຂ້ອຍກັບ ບາຣະນາບາ ເທົ່ານັ້ນບໍ້ ທີ່ບໍ່ມີສິດພັກຜ່ອນຍ່ອນໃຈໃນ
ການງານຂອງພຣະເຈົ້າຈັກໜ່ອຍຊະບໍ້
9:7 ມີໃຜແໜ່ທີ່ເປັນທະຫານໄປເຂົ້າການສຶກໃນສະໜາມຮົບ ແລ້ວຕ້ອງອອກເງິນ
ໃຊ້ຈ່າຍເອງ ຫລືແມ່ນໃຜແໜ່ທີ່ປຸກສວນອະງຸ່ນ ແລ້ວບໍ່ໄດ້ກິນຜົນຈາກສວນນັ້ນ
ຫລືແມ່ນໃຜແໜ່ທີ່ລ້ຽງຝູງແກະແລ້ວບໍ່ໄດ້ກິນນ້ຳນົມຂອງຝູງແກະນັ້ນ
9:8 ຂ້ອຍເວົ້າຈັ່ງຊີ້ຕາມຢ່າງທຳມະດາມະນຸດຢູ່ບໍ້ ບໍ່ແມ່ນມີຂໍ້ໃນກົດບັນຍັດ ທີ່ໄດ້
ເວົ້າໄວ້ຈັ່ງຊີ້ຄືກັນບໍ້
9:9 ຄືມີຂໍ້ໃນກົດບັນຍັດຂອງເຖົ້າ ໂມເຊ ທີ່ໄດ້ຂຽນໄວ້ວ່າ “ຢ່າສູ່ຄອບປາກງົວໄວ້
ບັດມັນພວມຢ່າງຢຽບເຂົ້າຢູ່” ໃນຂໍ້ນີ້ພຣະເຈົ້າເພິ່ນເປັນຫ່ວງພວກງົວບໍ້
9:10 ຫລືວ່າ ເຖົ້າ ໂມເຊ ໄດ້ເວົ້າໄວ້ເພື່ອໃຫ້ເປັນປະໂຫຍດຂອງພວກເຮົານີ້ ແທ້ຈິງ
ແລ້ວຂໍ້ນັ້ນມີຂຽນໄວ້ເພື່ອເວົ້າເຖິງຜົນປະໂຫຍດຂອງພວກເຮົານຳ ຄືປຽບຄົນທີ່

ໄຖນາ ເຂົາກໍໄຖດ້ວຍຄວາມຄາດຫວັງ ກັບຄົນທີ່ຕີເຂົ້າ ກໍຕີດ້ວຍຄວາມຄາດຫວັງ
ຄືກັນ ວ່າຄວນໄດ້ຮັບຜົນງານຕາມທີ່ຄາດໄວ້ນັ້ນ
9:11 ຄືຄັ້ນພວກເຮົາໄດ້ຫວ່ານທາງຈິດວິນຍານໃຫ້ພວກເຈົ້າແລ້ວ ມັນຊິເປັນເລື່ອງ
ໃຫຍ່ຢູ່ບໍ້ ຄັ້ນພວກເຮົາຫວັງຊິເກັບກ່ຽວລາງແນວຝ່າຍເນື້ອໜັງຈາກພວກເຈົ້າເປັນ
ຜົນຕອບແທນ
9:12 ຄືຄັ້ນຄົນອື່ນໆ ມີສິດທີ່ຊິຮັບຜົນປະໂຫຍດຈາກພວກເຈົ້າຈັ່ງຊີ້ ບໍ່ແມ່ນພວກ
ເຮົາແຮງມີສິດກວ່າພວກເຂົາອີກຢູ່ບໍ້ ຈັ່ງໃດກໍຕາມ ພວກເຮົາບໍ່ໄດ້ໃຊ້ສິດນີ້ເລີຍ
ແຕ່ໄດ້ຍອມທົນເອົາຕໍ່ຄວາມທຸກຍາກລໍາບາກອັນສາລະພັດ ເພື່ອຊິບໍ່ເປັນອຸປະ-
ສັກໃດໆ ຕໍ່ຂ່າວປະເສີດຂອງ ພຣະຄຣິດ
9:13 ພວກເຈົ້າບໍ່ຮູ້ບໍ້ວ່າ ຜູ້ທີ່ຮັບໃຊ້ງານສັກສິດຢູ່ໃນພຣະວິຫານນັ້ນ ກໍໄດ້ຮັບການ
ລ້ຽງດູຈາກພຣະວິຫານ ກັບຜູ້ທີ່ຮັບໃຊ້ງານຢູ່ນໍາແທ່ນບູຊາ ກໍໄດ້ຮັບການລ້ຽງດູ
ຈາກແທ່ນບູຊານັ້ນນໍາ
9:14 ໃນທໍານອງດຽວກັນ ພຣະຜູ້ເປັນເຈົ້າໄດ້ກໍານົດໄວ້ວ່າ ຄົນທີ່ປະກາດຂ່າວປະ-
ເສີດຄວນໄດ້ຮັບການລ້ຽງດູດ້ວຍຂ່າວປະເສີດນັ້ນນໍາ
9:15 ແຕ່ສ່ວນຂ້ອຍນີ້ ກໍບໍ່ໄດ້ໃຊ້ສິດນີ້ເລີຍ ແລ້ວຂ້ອຍບໍ່ໄດ້ຂຽນເລື່ອງນີ້ເພື່ອຊັກຈູງ
ໃຫ້ຊ່ອຍຂ້ອຍແນວນັ້ນດອກ ຍ້ອນວ່າຂ້ອຍຍອມຕາຍກໍຊິດີກວ່າ ແທນທີ່ຊິໃຫ້ຜູ້-
ໃດເຮັດໃຫ້ກຽດຂອງຂ້ອຍໃນເລື່ອງນີ້ໝົດໄປ
9:16 ຄືເຖິງແມ່ນວ່າ ຂ້ອຍປະກາດຂ່າວປະເສີດ ຂ້ອຍກໍບໍ່ມີອີຫຍັງທີ່ຊິອວດໄດ້
ເລີຍ ຍ້ອນວ່າຂ້ອຍມີໃຈກະຕືລືລົ້ນວ່າຊິຕ້ອງປະກາດຂ່າວປະເສີດ ແລ້ວຄັ້ນຂ້ອຍ
ບໍ່ໄດ້ປະກາດນັ້ນ ໃຈຂ້ອຍກໍຊິເປັນທຸກຫລາຍ
9:17 ຄືຄັ້ນຂ້ອຍປະກາດໂດຍການສະໝັກໃຈ ຂ້ອຍກໍຊິໄດ້ບໍາເໜັດລາງວັນ ແຕ່
ຄັ້ນຂ້ອຍຊິຝືນໃຈປະກາດ ກໍຍັງເປັນການງານທີ່ພຣະເຈົ້າໄດ້ມອບໝາຍໄວ້ໃຫ້
ຂ້ອຍເຮັດ
9:18 ແລ້ວຄັ້ນຈັ່ງຊັ້ນ ຂ້ອຍຊິໄດ້ຮັບບໍາເໜັດລາງວັນອີຫຍັງເປັນຄ່າຕອບແທນ
ບໍາເໜັດຂອງຂ້ອຍນັ້ນກໍຄືຂ້ອຍຍິນດີທີ່ຊິປະກາດຂ່າວປະເສີດເລື່ອງ ພຣະຄຣິດ

ໂດຍບໍ່ໄດ້ຂໍຄ່າຕອບແທນອີຫຍັງເລີຍ ເພື່ອຂ້ອຍຊິບໍ່ໄດ້ໃຊ້ສິດໃນຂ່າວປະເສີດ
ນັ້ນໃນທາງບໍ່ແມ່ນ
9:19 ຄືເຖິງແມ່ນວ່າຂ້ອຍມີອິດສະຫລະເສລີຈາກການບັງຄັບຂອງຜູ້ໃດກໍຕາມ
ຂ້ອຍກໍຍັງຍິນດີທີ່ຊິຍອມເປັນຂ້າທາດຮັບໃຊ້ຂອງຄົນທັງຫລາຍ ເພື່ອຊິໄດ້ນຳເຂົາ
ມາຮັບເຊື່ອເປັນຈຳນວນຫລາຍຂຶ້ນ
9:20 ຕໍ່ພວກຄົນ ຢິວ ຂ້ອຍກໍວາງໂຕຄືກັນກັບຄົນ ຢິວ ເພື່ອຊິໄດ້ນຳພວກຄົນ ຢິວ
ມາຮັບເຊື່ອ ຕໍ່ພວກຄົນທີ່ຢູ່ໃຕ້ກົດບັນຍັດນັ້ນ ຂ້ອຍກໍວາງໂຕຄືກັນກັບຄົນທີ່ຢູ່ໃຕ້
ກົດບັນຍັດ ເພື່ອຊິໄດ້ຄົນທີ່ຢູ່ໃຕ້ກົດບັນຍັດນັ້ນມາຮັບເຊື່ອນຳ
9:21 ຕໍ່ຄົນທີ່ຢູ່ນອກກົດບັນຍັດ ຂ້ອຍກໍວາງໂຕຄືກັນກັບຢູ່ນອກກົດບັນຍັດຄືກັນ
ເພື່ອຊິໄດ້ຄົນທີ່ຢູ່ນອກກົດບັນຍັດນັ້ນມາຮັບເຊື່ອ (ທັງໆ ທີ່ວ່າຂ້ອຍບໍ່ໄດ້ຢູ່ນອກ
ກົດບັນຍັດຂອງພຣະເຈົ້າດອກ ແຕ່ຢູ່ໃຕ້ກົດຂອງ ພຣະເຢຊູຄຣິດ )
9:22 ຕໍ່ຄົນທີ່ມີຄວາມເຊື່ອອ່ອນ ຂ້ອຍກໍວາງໂຕຄືກັນກັບເປັນຄົນທີ່ມີຄວາມເຊື່ອ
ອ່ອນຄືກັນ ເພື່ອຊິໄດ້ຄົນທີ່ມີຄວາມເຊື່ອອ່ອນມາຮັບເຊື່ອນຳ ຄືຂ້ອຍຍອມເປັນ
ຄົນຄູ່ຮູບແບບຕໍ່ຄົນທັງຫລາຍ ເພື່ອຊິໄດ້ນຳເຂົາຜູ້ລາງຄົນມາສູ່ຄວາມລອດພົ້ນ
9:23 ຄືຂ້ອຍຍອມເຮັດຈັ່ງຊີ້ຍ້ອນເຫັນແກ່ຂ່າວປະເສີດນັ້ນເອງ ເພື່ອຂ້ອຍຊິໄດ້ມີ
ສ່ວນຮ່ວມໃນຂ່າວປະເສີດນຳກັນກັບພວກເຈົ້າ
9:24 ພວກເຈົ້າບໍ່ຮູ້ບໍ້ວ່າ ນັກກິລາຄົນທີ່ແລ່ນແຂ່ງຂັນກໍແລ່ນກັນໝົດຄູ່ຄົນ ແຕ່ຊິມີຜູ້
ດຽວເທົ່ານັ້ນທີ່ຊິໄດ້ຮັບລາງວັນທີ່ໜຶ່ງ ຈັ່ງຊັ້ນກໍໃຫ້ແລ່ນດ້ວຍເຕັມກຳລັງເພື່ອມີ
ຫວັງຊິງລາງວັນນັ້ນໃຫ້ໄດ້
9:25 ແລ້ວຝ່າຍພວກນັກກິລາຄູ່ຄົນທີ່ແຍ່ງຊິງກັນນັ້ນ ເຂົາກໍໃສ່ໃຈໃນລະບຽບຄູ່
ຢ່າງເພື່ອຄວ້າເອົາລາງວັນໃຫ້ໄດ້ ແລ້ວທີ່ເຂົາເຮັດຈັ່ງຊັ້ນກໍເພື່ອຊິໄດ້ມົງກຸດອະນິ-
ຈັງທີ່ລ່ວງໄປໄດ້ ແຕ່ຝ່າຍພວກເຮົາກໍເຮັດເພື່ອຊິໄດ້ມົງກຸດອຳມະຕະທີ່ບໍ່ມີການ
ລ່ວງໄປເລີຍ
9:26 ຈັ່ງຊັ້ນ ສ່ວນໂຕຂ້ອຍນີ້ ຂ້ອຍກໍແລ່ນແຂ່ງຢ່າງມີເປົ້າໝາຍອັນໝັ້ນຄົງ ແລ້ວ
ຂ້ອຍກໍຕໍ່ສູ້ຢ່າງເຕັມທີ່ ບໍ່ແມ່ນຄືນັກມວຍທີ່ຊ້ອມຊົກແຕ່ລົມ

9:27 ແຕ່ຂ້ອຍຝຶກຊ້ອມທຸບຕີຮ່າງກາຍໃຫ້ຢູ່ໃຕ້ການບັງຄັບຂອງຂ້ອຍເອງ ຢ້ານວ່າ
ບັດຂ້ອຍໄດ້ປະກາດໃຫ້ຄົນອື່ນແລ້ວ ໂຕຂ້ອຍເອງ ອາດ ຊິຕົກເປັນຄົນປະເພດທີ່
ໃຊ້ການບໍ່ໄດ້ເລີຍ

## 1 ໂກຣິນໂທ ບົດທີ 10

10:1 ແລ້ວຍິ່ງກວ່ານີ້ອີກ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍຢາກໃຫ້ພວກເຈົ້າເຂົ້າໃຈວ່າ
ປູ່ຍ່າຕາຍາຍໝົດຄູ່ຄົນຂອງພວກຄົນ ຢິວ ນັ້ນ ພວກເຂົາໄດ້ຖືກພຣະເຈົ້ານຳໄປ
ທາງເມກນັ້ນໃນທ້ອງຟ້າ ກັບໄດ້ຍ່າງຜ່ານກາງທ້ອງທະເລໄປນຳ
10:2 ຄືເຂົາຄູ່ຄົນໄດ້ເຂົ້າມີສ່ວນຮ່ວມໃນການນຳພາຂອງເຖົ້າ ໂມເຊ ພາຍໃຕ້ເມກ
ກັບໃນທ້ອງທະເລນັ້ນນຳ
10:3 ກັບເຂົາໝົດຄູ່ຄົນໄດ້ຮັບກິນອາຫານທິບຝ່າຍວິນຍານອັນດຽວກັນ
10:4 ກັບໄດ້ຮັບດື່ມນ້ຳທິບຝ່າຍວິນຍານອັນດຽວກັນນຳ ຄືຮັບດື່ມນ້ຳທິບນັ້ນ ທີ່ໄຫລ
ອອກມາຈາກກ້ອນຫີນທິບທີ່ຕິດຕາມເຂົາມາ ແລ້ວກ້ອນຫີນທິບນັ້ນໝາຍເຖິງ
ພຣະຄຣິດ
10:5 ແຕ່ວ່າ ມີຫລາຍຄົນໃນຄົນພວກນັ້ນທີ່ພຣະເຈົ້າບໍ່ພໍໃຈຫລາຍ ຈັ່ງໄດ້ລົບລ້າງ
ເຂົາໃຫ້ຕາຍກະຈາຍໄປໃນຖິ່ນແຫ້ງແລ້ງ
10:6 ບັດນີ້ ແນວໝູ່ນີ້ໄດ້ເປັນໂຕຢ່າງ ໄວ້ໃຫ້ເຕືອນພວກເຮົາ ບໍ່ໃຫ້ມີໃຈຂີ້ໂລບ
ຫລົງໄປຕາມແນວຊົ່ວແນວບໍ່ດີຄືກັນກັບເຂົາ
10:7 ແລ້ວພວກເຈົ້າຢ່າໄປນັບຖືຮູບເຄົາລົບຄືກັນກັບທີ່ຜູ້ລາງຄົນໃນພວກເຂົາ ຕາມ
ທີ່ມີຄຳຂຽນໄວ້ແລ້ວວ່າ “ປະຊາຊົນໄດ້ນັ່ງລົງກິນດື່ມກັນ ແລ້ວກໍລຸກຂຶ້ນຫລິ້ນສະ-
ໜຸກສະໜານມ່ວນຊື່ນກັນຢູ່ຫັ້ນ”
10:8 ແລ້ວຢ່າໃຫ້ພວກເຮົາຫລົງໄປເຮັດການລ່ວງປະເວນີ ຄືກັນກັບທີ່ຜູ້ລາງຄົນໃນ
ພວກເຂົາໄດ້ເຮັດນັ້ນ ແລ້ວຈັ່ງລົ້ມລົງຕາຍໃນມື້ດຽວ ເປັນຈຳນວນສອງໝື່ນສາມ
ພັນຄົນ
10:9 ຢ່າໃຫ້ພວກເຮົາທ້າທາຍລອງດູ ພຣະຄຣິດ ຄືກັນກັບຜູ້ລາງຄົນໃນພວກເຂົາ
ແລ້ວເຂົາກໍພິນາດໄປຍ້ອນຖືກງູຮ້າຍຕອດຕາຍ

10:10 แล้วย่าเป็นคืนขี้จิ่มคือกันกับผู้ลางคืนในพวกเຂົາ ແล้วເຂົາຈັ່ງຖືກພິ-
ນາດໄປດ້ວຍເພັດຊະຄາດນັ້ນ
10:11 ເຫດການແນວໝູ່ນີ້ໄດ້ເປັນໄປກັບພວກເຂົາເພື່ອເປັນໂຕຢ່າງ ຄືມີຂຽນໄວ້
ເພື່ອເຕືອນພວກເຮົານຳ ຜູ້ຊຶ່ງຢູ່ໃນຍາມສຸດປາຍຂອງຍຸກທີ່ມາຮອດແລ້ວນັ້ນ
10:12 ຈັ່ງຊັ້ນ ໃຫ້ຜູ້ທີ່ຄຶດວ່າໂຕເອງຢືນຢ່າງໝັ້ນຄົງ ໃຫ້ລະວັງໂຕໄວ້ໃຫ້ດີເດີ້ ບໍ່ຊັ້ນ
ອາດ ຊິລົ້ມລົງກໍໄດ້
10:13 ຄືບໍ່ມີການທົດລອງອິຫຍັງທີ່ເຄີຍເກີດຂຶ້ນນຳພວກເຈົ້າ ນອກຈາກທີ່ເຄີຍເກີດ
ຂຶ້ນນຳມະນຸດຜູ້ອື່ນໆ ມາແລ້ວ ແຕ່ວ່າ ພຣະເຈົ້າເພິ່ນເປັນຜູ້ສັດຊື່ ຈັ່ງຊິບໍ່ໃຫ້ເຈົ້າ
ຖືກການທົດລອງເກີນກວ່າຊິທົນເອົາໄດ້ ແລ້ວຊິໂຜດໃຫ້ມີທາງຫລີກອອກມາໄດ້
ນຳ ເພື່ອເຈົ້າຊິສາມາດທົນເອົາໄດ້
10:14 ຈັ່ງຊັ້ນ ພີ່ນ້ອງທີ່ຮັກຂອງຂ້ອຍ ເອີຍ ໃຫ້ໜີພົ້ນຈາກການຖືຮູບເຄົາລົບເດີ້
10:15 ຂ້ອຍເວົ້ານຳພວກເຈົ້າຄືກັນກັບເວົ້າກັບຜູ້ທີ່ມີສະຕິປັນຍາແລ້ວ ໃຫ້ເຈົ້າພິຈາ-
ລະນາເອົາໃນແນວທີ່ຂ້ອຍເວົ້າມານີ້ເດີ້
10:16 ຈອກນັ້ນທີ່ພວກເຮົາຮັບກິນດ້ວຍຄວາມຂອບໃຈກໍເປັນພຣະພອນຫລາຍ
ເປັນທີ່ຖວາຍກຽດພຣະເຈົ້າ ຊຶ່ງເວົ້າເຖິງການມີສ່ວນຮ່ວມໃນພຣະໂລຫິດຂອງ-
ພຣະຄຣິດບໍ່ແມ່ນບໍ້ ແລ້ວເຂົ້າຈີ່ທີ່ພວກເຮົາບິກິນນຳກັນນັ້ນ ໄດ້ເວົ້າເຖິງການມີ
ສ່ວນຮ່ວມສາມັກຄີທຳໃນພຣະກາຍຂອງພຣະຄຣິດນຳບໍ່ແມ່ນບໍ້
10:17 ແລ້ວພວກເຮົາ ແມ່ນວ່າເປັນຄົນຫລວງຫລາຍ ກໍໄດ້ຮ່ວມເປັນກາຍດຽວກັນ
ມີສ່ວນຮ່ວມໃນເຂົ້າຈີ່ກ້ອນດຽວນັ້ນ
10:18 ນີ້ແຫລະ ໃຫ້ພິຈາລະນາພວກຄົນ ອິສະຣາເອນ ຕາມເນື້ອໜັງ ບໍ່ແມ່ນເຂົາຜູ້
ທີ່ກິນເຄື່ອງບູຊາແລ້ວນັ້ນ ກໍມີສ່ວນຮ່ວມກັນໃນແທ່ນບູຊາແທ່ນດຽວກັນບໍ່ແມ່ນບໍ້
10:19 ຄັນຈັ່ງຊີ້ ຂ້ອຍຊິອະທິບາຍຈັ່ງໃດນໍ້ ຊິວ່າຮູບເຄົາລົບນັ້ນສັກສິດອິຫຍັງບໍ້ ຫລື
ຊິວ່າເຄື່ອງບູຊາທີ່ຖືກຖວາຍນັ້ນສັກສິດອິຫຍັງບໍ້
10:20 ແຕ່ຂ້ອຍວ່າ ເຄື່ອງບູຊາທີ່ພວກຕ່າງຊາດໄດ້ຖວາຍນັ້ນ ແທ້ຈິງແລ້ວເຂົາກໍ
ຖວາຍບູຊາຕໍ່ພວກປີສາດ ບໍ່ແມ່ນຖວາຍຕໍ່ພຣະເຈົ້າດອກ ແລ້ວໃຈຂ້ອຍນີ້ກໍບໍ່-
ຢາກໃຫ້ເຈົ້າມີສ່ວນຮ່ວມສາມັກຄີກັບພວກປີສາດເປັນອັນຂາດເລີຍ

10:21 ເຈົ້າຊິຮ່ວມດື່ມຈອກຂອງພຣະຜູ້ເປັນເຈົ້າ ແລ້ວຫັນໄປຮ່ວມຈອກຂອງພວກ
ປີສາດນຳກໍບໍ່ໄດ້ເລີຍ ກັບເຈົ້າຊິຮ່ວມໂຕະຂອງພຣະຜູ້ເປັນເຈົ້າແລ້ວກໍໄປຮ່ວມ
ໂຕະຂອງປີສາດນຳກໍບໍ່ໄດ້ອີກ
10:22 ພວກເຮົາຊິຍົວະໃຫ້ຮ້າຍພຣະຜູ້ເປັນເຈົ້າໃຫ້ອິດສາບໍ້ ພວກເຮົາມີລິດອຳນາດ
ກວ່າເພິ່ນຢູ່ບໍ້
10:23 ຄືຂ້ອຍມີສິດເຮັດໄດ້ໝົດຄູ່ແນວ ແຕ່ບໍ່ແມ່ນຄູ່ແນວນັ້ນທີ່ເປັນປະໂຫຍດ
ຂ້ອຍມີສິດເຮັດໄດ້ໝົດຄູ່ແນວ ແຕ່ບໍ່ແມ່ນຄູ່ແນວທີ່ຊິເສີມສ້າງໃຫ້ຈະເລີນຂຶ້ນ
10:24 ຢ່າໃຫ້ຜູ້ໃດຕິດຕາມຜົນປະໂຫຍດຂອງໂຕເອງເດີ້ ແຕ່ໃຫ້ຊ່ອຍຄົນອື່ນໃຫ້ຢູ່
ດີມີແຮງດີກວ່າ
10:25 ຄູ່ແນວທີ່ຂາຍກັນໃນຕະຫລາດຊີ້ນນັ້ນ ກໍໃຫ້ຊື້ໄປກິນ ໂລດ ເດີ້ ບໍ່ຕ້ອງຖາມ
ເພື່ອຄວາມສະບາຍຂອງຈິດສຳນຶກໂຕເອງ
10:26 ຍ້ອນວ່າ “ແຜ່ນດິນໂລກເປັນຂອງພຣະຜູ້ເປັນເຈົ້າ ພ້ອມທັງໝົດຄູ່ແນວທີ່ຢູ່
ໃນຫັ້ນ.”
10:27 ຄືຄັ່ນຜູ້ທີ່ບໍ່ເຊື່ອຊິເຊີນເຈົ້າໄປກິນລ້ຽງກັນ ແລ້ວເຈົ້າຄຶດຢາກໄປ ແນວໃດທີ່
ເຂົາວາງໄວ້ນັ້ນ ກໍໃຫ້ກິນ ໂລດ ເດີ້ ໂດຍບໍ່ຕ້ອງຖາມເພື່ອຄວາມສະບາຍຈິດໃຈ
10:28 ແຕ່ຄັ່ນມີໃຜບອກເຈົ້າວ່າ “ຂອງກິນນີ້ເຂົາຖວາຍໃຫ້ຮູບເຄົາລົບແລ້ວ” ເຈົ້າ
ຢ່າກິນເດີ້ ເພື່ອເຫັນແກ່ຜູ້ທີ່ບອກມານັ້ນ ກັບເພື່ອເຫັນແກ່ໃຈສຳນຶກຜິດຖືກນຳ
ຍ້ອນວ່າ “ແຜ່ນດິນໂລກເປັນຂອງພຣະຜູ້ເປັນເຈົ້າ ພ້ອມທັງໝົດຄູ່ແນວທີ່ຢູ່ໃນ
ຫັ້ນ.”
10:29 ທີ່ຂ້ອຍວ່າ ໃຈສຳນຶກຜິດຖືກນັ້ນ ຂ້ອຍບໍ່ໄດ້ໝາຍເຖິງຂອງເຈົ້າດອກ ແຕ່ໝ
າຍເຖິງຂອງຄົນອື່ນນັ້ນ ຄືເປັນຫຍັງເສລີພາບຂອງຂ້ອຍນີ້ ຊິຕ້ອງຖືກການຕັດສິນ
ຍ້ອນໃຈສຳນຶກຜິດຖືກທີ່ຍັງອ່ອນຂອງຜູ້ອື່ນ
10:30 ຄືວ່າ ຄັ່ນຂ້ອຍມີເສລີພາບທີ່ຊິຮັບກິນໄດ້ໂດຍການຂອບຄຸນແລ້ວ ເປັນຫຍັງ
ຂ້ອຍຄືຊິຕ້ອງຖືກການຕິຕຽນໂຈມຕີໃນແນວທີ່ຂ້ອຍໄດ້ຂອບຄຸນພຣະເຈົ້າແລ້ວ
ນັ້ນ

10:31 ຈັ່ງຊັ້ນ ບັດເຈົ້າຊິກິນ ຊິດື່ມ ຫລືຊິເຮັດອີຫຍັງກໍຕາມ ໃຫ້ເຮັດໝົດຄູ່ແນວເພື່ອ
ເປັນການຖວາຍພຣະກຽດແດ່ພຣະເຈົ້າເດີ້
10:32 ຢ່າເປັນຕົ້ນເຫດໃຫ້ຄົນອື່ນສະດຸດລົ້ມລົງເດີ້ ບໍ່ວ່າຊິເປັນພວກຄົນ ຢິວ ກໍດີ
ຫລືພວກຄົນຕ່າງຊາດກໍດີ ຫລືພີ່ນ້ອງໃນກຸ່ມຜູ້ເຊື່ອຂອງພຣະເຈົ້າກໍຢ່າ
10:33 ຄືກັນກັບທີ່ຂ້ອຍພະຍາຍາມເຮັດຄູ່ຢ່າງເພື່ອໃຫ້ຖືກໃຈຄົນທັງໝົດ ຄືບໍ່ໄດ້
ເຫັນແກ່ຜົນປະໂຫຍດສ່ວນໂຕ ແຕ່ເຫັນແກ່ຜົນປະໂຫຍດຂອງຄົນທັງຫລາຍນັ້ນ
ເພື່ອຫລັງເທື່ອເຂົາ ອາດ ຊິລອດພົ້ນໄດ້

# 1 ໂກຣິນໂທ ບົດທີ 11

11:1 ໃຫ້ພວກເຈົ້າໃຊ້ຊີວິດຕາມແບບຢ່າງຂອງຂ້ອຍເດີ້ ຄືກັນກັບທີ່ຂ້ອຍໃຊ້ຊີວິດ
ຕາມແບບຢ່າງຂອງ ພຣະຄຣິດ
11:2 ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍຢາກຍ້ອງພວກເຈົ້າທີ່ວ່າພວກເຈົ້າບໍ່ໄດ້ລືມ
ຂ້ອຍໃນຈັກແນວ ຄືພວກເຈົ້າໄດ້ຮັກສາຫລັກຄຳສອນນັ້ນທີ່ຂ້ອຍໄດ້ມອບໄວ້ໃຫ້
ກັບພວກເຈົ້າ
11:3 ແຕ່ຂ້ອຍຢາກໃຫ້ພວກເຈົ້າເຂົ້າໃຈໄວ້ວ່າ ພຣະຄຣິດ ເພິ່ນເປັນຫົວເປັນຫົວ-
ໜ້າຂອງຜູ້ຊາຍຄູ່ຄົນ ກັບຜູ້ຊາຍເປັນຫົວໜ້າແມ່ຍິງຂອງໂຕ ແລ້ວພຣະເຈົ້າຜູ້ເປັນ
ພໍ່ ເພິ່ນກໍເປັນຫົວເປັນຫົວໜ້າຂອງ ພຣະຄຣິດ
11:4 ຜູ້ຊາຍຜູ້ໃດທີ່ອະທິຖານກໍດີ ຫລືບັນລະຍາຍ ພຣະຄຳ ກໍດີ ຄັ່ນເຮັດໂດຍມີຜ້າ
ຄຸມຫົວ ກໍເຮັດໃຫ້ກຽດໃນຖານະການເປັນຜູ້ຊາຍຂອງເຂົາເສື່ອມເສຍໄປ
11:5 ແຕ່ຍິງຜູ້ໃດທີ່ອະທິຖານກໍດີ ຫລືບັນລະຍາຍ ພຣະຄຳ ກໍດີ ຄັ່ນນາງເຮັດໂດຍ
ບໍ່ມີຜ້າຄຸມຫົວໄວ້ ກໍເຮັດໃຫ້ກຽດໃນຖານະການເປັນແມ່ຍິງຂອງເຂົາເສື່ອມເສຍ
ໄປ ພໍຄືນາງຖືກແຖຫົວ
11:6 ຄືຄັ່ນແມ່ຍິງຊິບໍ່ຄຸມຫົວກໍໃຫ້ເຂົາຕັດຜົມສັ້ນ ໂລດ ເດີ້ ແຕ່ຄັ່ນການຕັດຜົມສັ້ນ
ຫລືການແຖຫົວຂອງແມ່ຍິງເປັນແນວທີ່ຄວນອັບອາຍ ກໍໃຫ້ນາງຄຸມຫົວໄວ້ ໂລດ
ເດີ້

11:7 ຄືການທີ່ຜູ້ຊາຍບໍ່ສົມຄວນຊິຄຸມຫົວນັ້ນ ກໍຍ້ອນວ່າຜູ້ຊາຍເປັນພາບລັກສະນະ
ກັບເປັນຄວາມສະຫງ່າຂອງພຣະເຈົ້າ ແຕ່ສ່ວນແມ່ຍິງນາງກໍເປັນຄວາມສະຫງ່າ
ຂອງຜູ້ຊາຍ
11:8 ຍ້ອນວ່າພຣະເຈົ້າບໍ່ໄດ້ສ້າງຜູ້ຊາຍຈາກໂຕແມ່ຍິງ ແຕ່ໄດ້ສ້າງແມ່ຍິງຈາກໂຕ
ຜູ້ຊາຍ
11:9 ກັບເພິ່ນບໍ່ໄດ້ສ້າງຜູ້ຊາຍໄວ້ສຳລັບແມ່ຍິງ ແຕ່ໄດ້ສ້າງແມ່ຍິງໄວ້ສຳລັບຜູ້ຊາຍ
11:10 ຍ້ອນເຫດນີ້ເນາະ ຜູ້ເປັນແມ່ຍິງຄວນຊິມີສັນຍະລັກເວົ້າເຖິງສິດທິອຳນາດໄວ້
ເທິງຫົວຂອງເຂົາ ຍ້ອນໝູ່ເທວະທູດ
11:11 ແຕ່ຈັ່ງໃດກໍດີ ຜູ້ຊາຍກໍບໍ່ໄດ້ຢູ່ຢ່າງອິດສະຫລະຈາກແມ່ຍິງ ແລ້ວແມ່ຍິງກໍບໍ່
ໄດ້ຢູ່ຢ່າງອິດສະຫລະຈາກຜູ້ຊາຍຄືກັນ ໃນພຣະຜູ້ເປັນເຈົ້າ
11:12 ຄືແມ່ຍິງມາຈາກຜູ້ຊາຍຈັ່ງໃດ ຜູ້ຊາຍກໍມາຈາກແມ່ຍິງຈັ່ງຊັ້ນຄືກັນ ແຕ່ສະ-
ຫລຸບຄວາມແລ້ວໝົດຄູ່ອັນຄູ່ແນວກໍມາຈາກພຣະເຈົ້າທັງນັ້ນ
11:13 ໃຫ້ພວກເຈົ້າຕັດສິນເອົາເອງເດີ້ ມັນຊິເປັນການສົມຄວນຕີ້ ທີ່ແມ່ຍິງຊິບໍ່ຄຸມ
ຫົວບັດຍາມອະທິຖານເວົ້ານຳພຣະເຈົ້ານັ້ນ
11:14 ຂະໜາດທຳຊາດເອງກໍຍັງສອນເຮົາໄວ້ ວ່າຄັ້ນຜູ້ຊາຍໄວ້ຜົມຍາວມັນກໍເປັນ
ເລື່ອງອັບອາຍສຳລັບເຂົາບໍ່ແມ່ນບໍ້
11:15 ແຕ່ຄັ້ນແມ່ຍິງໄວ້ຜົມຍາວມັນກໍເປັນຄວາມສະຫງ່າສຳລັບນາງ ຍ້ອນວ່າຜົມ-
ຂອງນາງເປັນແນວທີ່ພຣະເຈົ້າປະທານໃຫ້ເຂົາເພື່ອການຄຸມຫົວ
11:16 ແຕ່ຄັ້ນຜູ້ໃດຄຶດຢາກໂຕ້ຖຽງໃນເລື່ອງນີ້ ພວກເຮົາກັບພີ່ນ້ອງກຸ່ມຜູ້ເຊື່ອຂອງ
ພຣະເຈົ້າຢູ່ໝ້ອງອື່ນໆ ກໍບໍ່ມີທຳນຽມປະຕິບັດແບບນີ້ເລີຍດອກ
11:17 ບັດນີ້ ໃນການທີ່ຂ້ອຍແນະນຳນີ້ ຂ້ອຍກໍບໍ່ສາມາດຍ້ອງພວກເຈົ້າດອກ ຄືບັດ
ຍາມພວກເຈົ້າເຂົ້າຮ່ວມກັນ ບໍ່ໄດ້ເປັນເພື່ອຜົນດີ ແຕ່ມັນມັກຊິເກີດຜົນເສຍ
ຫລາຍກວ່າ
11:18 ປະການແຮກ ຂ້ອຍໄດ້ຍິນວ່າ ບັດກຸ່ມຜູ້ເຊື່ອຂອງພວກເຈົ້າມາຮ່ວມກັນ ໄດ້ມີ
ການແຕກຮ້າວແບ່ງພັກແບ່ງພວກໃນໝູ່ພວກເຈົ້າ ແລ້ວຂ້ອຍກໍເຊື່ອວ່າເລື່ອງທີ່
ຂ້ອຍໄດ້ຍິນມານັ້ນ ກໍມີສ່ວນຈິງແດ່

11:19 ຄືຂ້ອຍວ່າ ຊິຕ້ອງມີການຂັດແຍ້ງກັນແນ່ນອນໃນໝູ່ພວກເຈົ້າຢູ່ແລ້ວ ກໍເພື່ອ
ຝ່າຍທີ່ຖືກໃນພວກເຈົ້ານັ້ນຊິໄດ້ປາກົດອອກຢ່າງແຈ່ມແຈ້ງ
11:20 ເພື່ອບັດພວກເຈົ້າມາຮ່ວມຢູ່ພ້ອງດຽວກັນ ມັນບໍ່ແມ່ນເພື່ອມາຮ່ວມສະ-
ຫລອງກິນໃນພິທີລະນຶກເຖິງພຣະຜູ້ເປັນເຈົ້າດອກ
11:21 ຍ້ອນວ່າ ໃນການກິນຂອງພວກເຈົ້ານັ້ນ ຕ່າງຄົນກໍຕ່າງກິນບໍ່ຮູ້ຈັກຖ້າກັນ
ເລີຍ ຄືມີຜູ້ລາງຄົນກິນກ່ອນ ຜູ້ລາງຄົນມີບໍ່ພໍ ແລ້ວອີກຜູ້ລາງຄົນກໍເມົາ
11:22 ແມ່ນຫຍັງມັນຄືເປັນຈັ່ງຊີ້ ພວກເຈົ້າບໍ່ມີເຮືອນມີຊານທີ່ຊິກິນເຂົ້າກິນປາກ່ອນ
ບໍ້ ຫລືວ່າໃຈພວກເຈົ້າມັກຊິດູໝິ່ນກຸ່ມຜູ້ເຊື່ອຂອງພຣະເຈົ້າບໍ້ ຈັ່ງເຮັດໃຫ້ພີ່ນ້ອງຜູ້
ທີ່ທຸກຍາກລຳບາກອຶດຢາກຕ້ອງອັບອາຍ ຊິໃຫ້ຂ້ອຍເວົ້າຈັ່ງໃດກັບພວກເຈົ້ານໍ້ ຊິ
ໃຫ້ຍ້ອງເຈົ້າໃນເລື່ອງນີ້ບໍ້ ຂ້ອຍບໍ່ຍ້ອງພວກເຈົ້າດອກ
11:23 ຄືເລື່ອງນີ້ທີ່ຂ້ອຍໄດ້ຮັບມອບໝາຍຈາກພຣະຜູ້ເປັນເຈົ້ານັ້ນ ຂ້ອຍຈັ່ງນຳມາ
ໃຫ້ພວກເຈົ້າ ຄືໃນຄືນດຽວກັນທີ່ພຣະເຢຊູເຈົ້າ ໄດ້ຖືກເຂົາທໍລະຍົດຫັກຫລັງນັ້ນ
ເພິ່ນໄດ້ຫຍິບເອົາເຂົ້າຈີ່ຂຶ້ນມາ
11:24 ແລ້ວພໍເພິ່ນໄດ້ອະທິຖານຂອບໃຈພຣະເຈົ້າຜູ້ເປັນພໍ່ ເພິ່ນຈັ່ງບິເຂົ້າຈີ່ອອກ
ເວົ້າວ່າ "ໃຫ້ຮັບກິນເດີ້ ນີ້ກໍເວົ້າເຖິງຮ່າງກາຍຂອງເຮົາ ຊຶ່ງຖືກທຳລາຍເພື່ອພວກ
ເຈົ້າ ເຮົາໃຫ້ເຮັດແນວນີ້ເດີ້ ເພື່ອເປັນການລະນຶກເຖິງເຮົາ"
11:25 ແລ້ວໃນທຳນອງດຽວກັນ ບັດກິນເຂົ້າຈີ່ແລ້ວເພິ່ນຈັ່ງຫຍິບຈອກຂຶ້ນມາເວົ້າ
ວ່າ "ຈອກນີ້ເວົ້າເຖິງຄຳໝັ້ນສັນຍາໃໝ່ທີ່ເຮັດດ້ວຍເລືອດຂອງເຮົາ ຍາມໃດພວກ
ເຈົ້າດື່ມຈອກນີ້ ກໍໃຫ້ດື່ມເປັນການລະນຶກເຖິງເຮົາເດີ້"
11:26 ຈັ່ງຊັ້ນ ຍາມໃດພວກເຈົ້າກິນເຂົ້າຈີ່ກັບດື່ມຈອກນີ້ ມັນກໍເປັນການປະກາດ
ເຖິງການຕາຍແທນຂອງພຣະຜູ້ເປັນເຈົ້າ ຈົນກວ່າເພິ່ນຊິສະເດັດມາອີກ
11:27 ຈັ່ງຊັ້ນ ຄັນຜູ້ໃດກິນເຂົ້າຈີ່ ກັບດື່ມຈອກຂອງພຣະຜູ້ເປັນເຈົ້ານີ້ຢ່າງບໍ່ສົມຄວນ
ຜູ້ນັ້ນກໍໄດ້ເຮັດຜິດຕໍ່ພຣະກາຍກັບພຣະໂລຫິດຂອງພຣະຜູ້ເປັນເຈົ້າ
11:28 ແຕ່ວ່າໃຫ້ຄູ່ຄົນພິຈາລະນາສະພາບໂຕເອງໄວ້ກ່ອນເດີ້ ຈັ່ງຊິກິນເຂົ້າຈີ່ກັບ
ດື່ມຈອກນີ້

11:29 ຍ້ອນວ່າຜູ້ໃດທີ່ກິນດື່ມຢ່າງບໍ່ສົມຄວນ ກໍໄດ້ກິນດື່ມເອົາໂທດມາໃສ່ໂຕເອງ
ຍ້ອນບໍ່ໄດ້ຄຳນຶງເຖິງກຽດຂອງພຣະກາຍພຣະຜູ້ເປັນເຈົ້າ
11:30 ຍ້ອນເຫດນີ້ເນາະ ຫລາຍຄົນໃນພວກເຈົ້າຈັ່ງອ່ອນກຳລັງ ແລ້ວກໍປ່ວຍ ພ້ອມ
ມີຫລາຍຄົນໄດ້ລ່ວງຫລັບໄປແລ້ວນຳ
11:31 ຄືຄັ່ນພວກເຮົາຊິພິຈາລະນາສະພາບໂຕເອງໄວ້ກ່ອນ ເຮົາຊິບໍ່ຖືກພຣະເຈົ້າ
ລົງໂທດດອກ
11:32 ແຕ່ບັດພວກເຮົາຖືກລົງໂທດນັ້ນ ພວກເຮົາກໍຖືກຕີສອນຈາກອົງພຣະຜູ້ເປັນ-
ເຈົ້າ ເພື່ອຊິບໍ່ຖືກພິພາກສາລົງໂທດຮ່ວມກັນກັບໂລກ
11:33 ຈັ່ງຊັ້ນ ຍ້ອນເຫດນີ້ເອງ ພີ່ນ້ອງຂອງຂ້ອຍ ເອີຍ ບັດເຈົ້າມາຮ່ວມກິນນຳກັນ
ນັ້ນ ໃຫ້ຖ້າກິນພ້ອມກັນເດີ້
11:34 ແລ້ວຄັ່ນມີໃຜຫິວ ກໍໃຫ້ເຂົາກິນຢູ່ບ້ານຊະກ່ອນເດີ້ ເພື່ອວ່າບັດຍາມມາຮ່ວມ
ກັນນັ້ນພວກເຈົ້າຊິບໍ່ເຂົ້າສູ່ການຕີສອນລົງໂທດຈາກພຣະເຈົ້າ ສ່ວນເລື່ອງແນວ
ອື່ນໆ ນັ້ນ ບັດຂ້ອຍມາຫາ ຂ້ອຍຈັ່ງຊິແນະນຳແກ້ໄຂໃຫ້

## 1 ໂກຣິນໂທ ບົດທີ 12

12:1 ພີ່ນ້ອງທັງຫລາຍເອີຍ ບັດນີ້ຂ້ອຍບໍ່ຢາກໃຫ້ເຈົ້າຂາດຄວາມເຂົ້າໃຈໃນເລື່ອງ
ພົນສະຫວັນພິເສດຝ່າຍວິນຍານນັ້ນ
12:2 ພວກເຈົ້າຮູ້ແລ້ວວ່າ ແຕ່ກ່ອນນັ້ນພວກເຈົ້າກໍເປັນຄົນຕ່າງຊາດ ຖືກຊັດໄປຊັດ
ມາຕາມແຕ່ຊິຖືກຈູງໄປ ຫລົງໄປນັບຖືຮູບເຄົາລົບອັນທີ່ປາກບໍ່ເປັນ
12:3 ຈັ່ງຊັ້ນ ຂ້ອຍຢາກໃຫ້ພວກເຈົ້າຮູ້ວ່າ ຊິບໍ່ມີໃຜເລີຍ ທີ່ຊິປ້ອຍດ່າ ພຣະເຢຊູ ໃຫ້
ຖືກສາບແຊ່ງດ້ວຍການຊົງນຳຂອງ ພຣະວິນຍານ ຂອງພຣະເຈົ້າດອກ ກັບຊິບໍ່ມີ
ໃຜເລີຍ ທີ່ຊິຮັບປາກວ່າ ພຣະເຢຊູ ໄດ້ເປັນພຣະຜູ້ເປັນເຈົ້າ ນອກຈາກດ້ວຍການ
ຊົງນຳຂອງ ພຣະວິນຍານ ນັ້ນ
12:4 ແລ້ວເລື່ອງພົນສະຫວັນພິເສດຝ່າຍວິນຍານນັ້ນ ມີຫລາຍຢ່າງທີ່ແຕກຕ່າງກັນ
ແຕ່ມີ ພຣະວິນຍານ ອົງດຽວ
12:5 ແລ້ວການຮັບໃຊ້ກໍມີຫລາຍຢ່າງທີ່ແຕກຕ່າງກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວ

12:6 ແລ້ວກິດຈະກຳກໍມີຫລາຍຢ່າງທີ່ແຕກຕ່າງກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວ
ທີ່ເປັນເຫດໃຫ້ຄູ່ຄົນເຮັດໄດ້ໝົດ
12:7 ແລ້ວການສຳແດງອອກຂອງ ກິດຈະການ ພຣະວິນຍານ ນັ້ນ ພຣະເຈົ້າກໍປະ-
ທານໃຫ້ພີ່ນ້ອງໝົດແຕ່ລະຄົນ ເພື່ອປະໂຫຍດສ່ວນຮ່ວມກັນ
12:8 ຄື ພຣະວິນຍານ ອົງດຽວ ໄດ້ໂຜດໃຫ້ຜູ້ລາງຄົນມີຄວາມເວົ້າຄວາມຈາທີ່ປະ-
ກອບດ້ວຍສະຕິປັນຍາ ແລ້ວອີກຜູ້ລາງຄົນມີຄວາມເວົ້າປະກອບດ້ວຍຄວາມ
ອ້ອມຮູ້ ຊຶ່ງເປັນໂດຍ ພຣະວິນຍານ ອົງດຽວກັນ
12:9 ກັບອີກຜູ້ລາງຄົນມີຄວາມເຊື່ອສູງໂດຍ ພຣະວິນຍານ ອົງດຽວກັນ ກັບອີກຜູ້
ລາງຄົນມີພົນສະຫວັນພິເສດ ຮັກສາຄົນເຈັບໄດ້ໂດຍ ພຣະວິນຍານ ອົງດຽວກັນ
12:10 ກັບອີກຜູ້ລາງຄົນເຮັດການອັດສະຈັນຕ່າງໆ ກັບອີກຜູ້ລາງຄົນບັນລະຍາຍ
ພຣະຄຳ ຂອງພຣະເຈົ້າໄດ້ ກັບອີກຜູ້ລາງຄົນສັງເກດວິນຍານຕ່າງໆ ອອກໄດ້
ກັບອີກຜູ້ລາງຄົນໄດ້ເວົ້າພາສາອື່ນໆ ໄດ້ ກັບອີກຜູ້ລາງຄົນແປພາສານັ້ນໄດ້
12:11 ແຕ່ວ່າ ໝົດຄູ່ແນວນີ້ ແມ່ນ ພຣະວິນຍານ ອົງດຽວທີ່ໄດ້ໂຜດໃຫ້ຄວາມສາ-
ມາດຝ່າຍວິນຍານ ແລ້ວເພິ່ນກໍແບ່ງປັນໃຫ້ແຕ່ລະຄົນຕາມພຣະປະສົງຂອງເພິ່ນ
ເອງ
12:12 ຄືກັນກັບວ່າ ຮ່າງກາຍຂອງຄົນເຮົາໄດ້ມີອະໄວຍະວະຫລາຍສ່ວນ ແຕ່ສ່ວນ
ຕ່າງໆ ນັ້ນກໍປະກອບກັນເຂົ້າມາເປັນກາຍດຽວ ເລື່ອງພຣະກາຍຂອງພຣະຄຣິດ
ກໍເປັນຈັ່ງຊັ້ນ
12:13 ຄື ບໍ່ວ່າພວກເຮົາຊິເປັນຄົນ ຢິວ ກໍດີ ຊິເປັນຄົນຕ່າງຊາດກໍດີ ຊິເປັນຂ້າທາດ
ກໍດີ ຫລືບໍ່ເປັນຂ້າທາດກໍດີ ພວກເຮົາທັງຫລາຍກໍຖືກຮັບເຂົ້າໃນພຣະກາຍອັນ
ດຽວກັນ ໂດຍ ພຣະວິນຍານ ອົງດຽວ ກັບໄດ້ຮັບດື່ມເຂົ້າຢູ່ໃນ ພຣະວິນຍານ ອົງ
ດຽວນັ້ນນຳ
12:14 ດ້ວຍວ່າ ຮ່າງກາຍບໍ່ແມ່ນມີແຄ່ອະໄວຍະວະດຽວ ແຕ່ວ່າມີອະໄວຍະວະ
ຫລາຍສ່ວນປະກອບກັນຢູ່

12:15 ເວົ້າພື້ນ ຄັນຕີນຊິເວົ້າວ່າ “ຍ້ອນຂ້ອຍບໍ່ໄດ້ເປັນມື ຂ້ອຍຈັ່ງບໍ່ໄດ້ເປັນສ່ວນ-
ໜຶ່ງຂອງຮ່າງກາຍເລີຍ” ແມ່ນບໍ້ ທີ່ວ່າຕີນກໍຊິບໍ່ເປັນອະໄວຍະວະຂອງຮ່າງກາຍ
ຍ້ອນບໍ່ໄດ້ເປັນມື
12:16 ແລ້ວຄັນຫູຊິເວົ້າວ່າ “ຍ້ອນຂ້ອຍບໍ່ໄດ້ເປັນຕາ ຂ້ອຍຈັ່ງບໍ່ໄດ້ເປັນສ່ວນໜຶ່ງ
ຂອງຮ່າງກາຍເລີຍ” ແມ່ນບໍ້ທີ່ວ່າຫູກໍຊິບໍ່ເປັນອະໄວຍະວະຂອງຮ່າງກາຍນັ້ນ
ຍ້ອນບໍ່ໄດ້ເປັນຕາ
12:17 ແລ້ວຄັນທັງຮ່າງກາຍຊິເປັນແຕ່ຕາ ການໄດ້ຍິນສຽງຊິຢູ່ໃສ ກັບຄັນໝົດທັງ
ຮ່າງກາຍເປັນແຕ່ຫູ ການດົມກິ່ນຊິຢູ່ໃສ
12:18 ແຕ່ບັດນີ້ ພຣະເຈົ້າໄດ້ແຕ່ງຕັ້ງອະໄວຍະວະຄູ່ສ່ວນໄວ້ໃນຮ່າງກາຍຂອງຄົນ
ເຮົາຕາມເປັນທີ່ຊອບຕາມພຣະປະສົງຂອງເພິ່ນເອງ
12:19 ແລ້ວ ຄັນຄູ່ສ່ວນນັ້ນເປັນແຄ່ອະໄວຍະວະດຽວ ຮ່າງກາຍອັນຄົບຖ້ວນນັ້ນຊິ
ຢູ່ໃສ
12:20 ແຕ່ທີ່ຈິງແລ້ວ ຮ່າງກາຍນັ້ນກໍມີອະໄວຍະວະຫລາຍສ່ວນ ແຕ່ກໍຍັງປະກອບ
ເຂົ້າກັນເປັນຮ່າງກາຍດຽວ
12:21 ຄື ຕາບໍ່ມີສິດເວົ້າກັບມືວ່າ “ຂ້ອຍບໍ່ຕ້ອງການເຈົ້າດອກ” ຫລືວ່າຫົວບໍ່ມີສິດ
ເວົ້າກັບຕີນວ່າ “ຂ້ອຍບໍ່ຕ້ອງການເຈົ້າດອກ”
12:22 ແຕ່ອະໄວຍະວະຂອງຮ່າງກາຍສ່ວນທີ່ເບິ່ງວ່າອ່ອນດ້ອຍບໍ່ມີຄວາມສຳຄັນ
ກັບເປັນວ່າ ສຳຄັນອີຫລີ
12:23 ກັບອະໄວຍະວະຂອງຮ່າງກາຍສ່ວນທີ່ພວກເຮົາຖືວ່າດ້ອຍກຽດ ເຮົາກໍໃຫ້
ກຽດຫລາຍກວ່າ ກັບອະໄວຍະວະສ່ວນທີ່ເຮົາວ່າບໍ່ງາມ ກັບເປັນວ່າງາມກວ່າ
12:24 ຍ້ອນວ່າອະໄວຍະວະສ່ວນທີ່ງາມແລ້ວ ບໍ່ຈຳເປັນທີ່ຊິເພີ່ມອີຫຍັງ ຈັ່ງໃດກໍ
ຕາມ ພຣະເຈົ້າໄດ້ປະກອບຮ່າງກາຍໃຫ້ອະໄວຍະວະທີ່ເບິ່ງວ່າດ້ອຍກຽດນັ້ນ ໃຫ້
ມີກຽດຫລາຍກວ່າ
12:25 ອັນນີ້ກໍເພື່ອບໍ່ໃຫ້ມີການແກ່ງແຍ່ງແຕກຮ້າວອີຫຍັງກັນໃນຮ່າງກາຍ ແຕ່ໃຫ້
ອະໄວຍະວະຄູ່ສ່ວນມີຄວາມ ສຳພັນຫ່ວງໃຍ ເກື້ອກູນຊຶ່ງກັນແລະກັນ

12:26 ແລ້ວຄັນອະໄວຍະວະສ່ວນໃດສ່ວນໜຶ່ງເກີດມີຄວາມເຈັບປວດຂຶ້ນມາ ອະ-
ໄວຍະວະຄູ່ສ່ວນກໍຊິເຈັບປວດຕາມ ຫລືວ່າຄັນອະໄວຍະວະສ່ວນໃດສ່ວນໜຶ່ງ
ໄດ້ຮັບກຽດ ອະໄວຍະວະຄູ່ສ່ວນກໍຊິຊົມຊື່ນຍິນດີນຳ
12:27 ບັດນີ້ ພວກເຈົ້າເປັນພຣະກາຍຂອງພຣະຄຣິດແລ້ວ ກັບຕ່າງຄົນຕ່າງກໍເປັນ
ອະໄວຍະວະຂອງພຣະກາຍນັ້ນ
12:28 ກັບພຣະເຈົ້າໄດ້ແຕ່ງຕັ້ງຜູ້ລາງຄົນໃນກຸ່ມຜູ້ເຊື່ອໄວ້ເປັນພິເສດ ປະການແຮກ
ນັ້ນ ມີທູດພິເສດ ສອງມີຜູ້ບັນລະຍາຍ ພຣະຄຳ ສາມມີຜູ້ສອນ ແລ້ວຕໍ່ຈາກຫັ້ນມາ
ກໍມີການອັດສະຈັນ ກັບມີພົນສະຫວັນພິເສດໃນການຮັກສາພະຍາດ ໃນການ
ຊ່ອຍເຫລືອກັນ ໃນການປົກຄອງເບິ່ງແຍງກັນ ກັບພາສາອື່ນໆ ນຳ
12:29 ແມ່ນຄູ່ຄົນບໍ້ທີ່ເປັນທູດພິເສດ ແມ່ນຄູ່ຄົນບໍ້ທີ່ເປັນຜູ້ບັນລະຍາຍ ພຣະຄຳ
ແມ່ນຄູ່ຄົນບໍ້ທີ່ເປັນຜູ້ສອນ ແມ່ນຄູ່ຄົນບໍ້ທີ່ເຮັດການອັດສະຈັນໄດ້
12:30 ແມ່ນຄູ່ຄົນບໍ້ທີ່ໄດ້ຮັບພົນສະຫວັນພິເສດໃຫ້ຮັກສາພະຍາດ ແມ່ນຄູ່ຄົນບໍ້ທີ່
ເວົ້າພາສາອື່ນໆ ໄດ້ ແມ່ນຄູ່ຄົນບໍ້ທີ່ເປັນລ່າມແປໄດ້
12:31 ແຕ່ໃຫ້ປາດຖະໜາພົນສະຫວັນພິເສດທີ່ດີຍິ່ງເດີ້ ແລ້ວບັດນີ້ຂ້ອຍຊິຊີ້ແຈງ
ອີກທາງໜຶ່ງທີ່ດີເລີດເໜືອກວ່ານັ້ນອີກ

## 1 ໂກຣິນໂທ ບົດທີ 13

13:1 ແມ່ນແຕ່ຂ້ອຍ ອາດ ຊິເວົ້າພາສາອື່ນໆ ຂອງມະນຸດກໍດີ ຫລື ອາດ ຊິເວົ້າເປັນ
ພາສາຂອງເທວະທູດກໍຢ່າ ແຕ່ຄັນຂາດຄວາມຮັກ ຂ້ອຍກໍກາຍເປັນແຄ່ຄ້ອງຫລື
ຫາສີທີ່ພວມສົ່ງສຽງອອກໄປຊື່ໆ
13:2 ແລ້ວແມ່ນວ່າຂ້ອຍ ອາດ ຊິມີພົນສະຫວັນພິເສດຝ່າຍວິນຍານໃນການບັນ-
ລະຍາຍ ພຣະຄຳ ໄດ້ ກັບ ອາດ ສາມາດເຂົ້າໃຈໃນຄວາມເລິກລັບທັງໝົດ ກັບມີ
ຄວາມຮູ້ຄວາມເຂົ້າໃຈໃນໝົດຄູ່ແນວ ແລ້ວແມ່ນວ່າຂ້ອຍ ອາດ ມີຄວາມເຊື່ອ
ເຂັ້ມແຂງອັນໃຫຍ່ຫລວງພໍທີ່ຊິສັ່ງພູເຂົາໃຫ້ຍົກຍ້າຍອອກໄປໄດ້ ແຕ່ຄັນຂາດ
ຄວາມຮັກ ໂຕຂ້ອຍບໍ່ມີສາລະອີຫຍັງ

13:3 ແລ້ວແມ່ນວ່າຂ້ອຍ ອາດ ຊິມອບຖວາຍຊັບສົມບັດຂອງໂຕເອງໃຫ້ໝົດເພື່ອ
ບໍລິຈາກລ້ຽງຄົນຍາກຈົນ ກັບແມ່ນວ່າຂ້ອຍ ອາດ ຊິຍອມມອບໂຕເອງໃຫ້ເປັນ
ເຄື່ອງບູຊາເຜົາໄຟ ແຕ່ຄັ້ນຂາດຄວາມຮັກ ຂ້ອຍກໍບໍ່ໄດ້ກໍາໄລອີຫຍັງ
13:4 ຄືຄວາມຮັກແບບຂອງພຣະເຈົ້ານັ້ນກໍອົດທົນໄດ້ໂດນແສນໂດນ ກັບຄວາມຮັກ
ແບບນັ້ນກໍມີແຕ່ເມດຕາ ປານີ ຄວາມຮັກແບບນັ້ນບໍ່ເຄີຍອິດສາໃຜ ຄວາມຮັກ
ແບບນັ້ນບໍ່ເຄີຍອວດໂຕ ກັບບໍ່ເຄີຍຍິ່ງຜະຫຍອງ
13:5 ຄວາມຮັກແບບນັ້ນບໍ່ເຄີຍເຮັດໃນແນວທີ່ບໍ່ຈົບບໍ່ງາມ ບໍ່ເຄີຍຄຶດເຫັນແກ່ໂຕ
ເອງຝ່າຍດຽວ ບໍ່ເຄີຍສຸນສຽວຮ້າຍງ່າຍ ບໍ່ເຄີຍມີຄວາມນຶກຄຶດໃນທາງຊົ່ວເລີຍ
13:6 ຄວາມຮັກແບບນັ້ນບໍ່ເຄີຍຊົມຊື່ນຍິນດີໃນຄວາມຊົ່ວຊ້າເລວຊາມ ແຕ່ຊົມຊື່ນ-
ຍິນດີໃນຄວາມຈິງຢູ່ຕະຫລອດ
13:7 ຄວາມຮັກແບບນັ້ນແບກເອົາໄດ້ຄູ່ຢ່າງ ເຊື່ອສ່ວນດີໃນຄູ່ຢ່າງ ມີຄວາມຫວັງ
ອັນດີໃນຄູ່ຢ່າງ ທົນເອົາໄດ້ຕໍ່ຄູ່ຢ່າງ
13:8 ການຮັກແພງແບບນັ້ນບໍ່ມີສູນສິ້ນໄປ ແຕ່ຄັ້ນແມ່ນວ່າຊິມີການບັນລະຍາຍ
ພຣະຄໍາ ມັນກໍຊິສູນສິ້ນໄປ ຄັ້ນແມ່ນວ່າຊິມີການເວົ້າພາສາອື່ນໆ ນັ້ນ ມັນກໍຊິ
ໝົດສິ້ນສຸດໄປ ຄັ້ນແມ່ນວ່າຊິມີຄວາມຮູ້ພິເສດ ມັນກໍຊິສາບສູນໄປນໍາ
13:9 ດ້ວຍວ່າ ແນວໃດທີ່ເຮົາເຂົ້າໃຈນັ້ນເຮົາເຂົ້າໃຈແຄ່ລາງສ່ວນ ກັບທີ່ເຮົາບັນ-
ລະຍາຍ ພຣະຄໍາ ຂອງພຣະເຈົ້ານັ້ນເຮົາເປີດເຜີຍແຄ່ລາງສ່ວນ
13:10 ແຕ່ບັດຍາມແນວທີ່ສົມບູນນັ້ນໄດ້ມາຮອດແລ້ວ ໃນບັດນັ້ນສ່ວນທີ່ບໍ່ຄົບຖ້ວນ
ກໍຊິຈົບລົງໄປ
13:11 ຕອນຂ້ອຍຍັງເປັນເດັກ ຂ້ອຍກໍເວົ້າຢ່າງເດັກໆ ເຂົ້າໃຈຢ່າງເດັກໆ ຄຶດຫາ
ເຫດຜົນຢ່າງເດັກໆ ແຕ່ບັດຂ້ອຍໂຕເປັນຜູ້ໃຫຍ່ແລ້ວຂ້ອຍກໍເຊົາເຮັດແນວເປັນ
ເດັກນັ້ນ
13:12 ດ້ວຍວ່າ ໃນຍາມນີ້ພວກເຮົາເຫັນແຄ່ມົວໆ ຄືເບິ່ງທາງແກ້ວຊື່ໆ ແຕ່ໃນຍາມ
ທີ່ຊິມາຮອດຫັ້ນ ພວກເຮົາຊິໄດ້ເຫັນຊັດເຈນໜ້າຕໍ່ໜ້າ ຄືໃນຍາມນີ້ຂ້ອຍຮູ້ແຄ່
ສ່ວນດຽວ ແຕ່ໃນຍາມທີ່ຊິມານັ້ນ ຂ້ອຍກໍຊິຮູ້ຈັກເພິ່ນຢ່າງທີ່ເພິ່ນໄດ້ຮູ້ຈັກຂ້ອຍ

13:13 ແລ້ວໃນຍາມນີ້ກໍຍັງມີ ຄວາມເຊື່ອ ຄວາມຫວັງ ກັບຄວາມຮັກດຳລົງຢູ່ ແລ້ວ
ໃນສາມແນວນີ້ຄວາມຮັກຍິ່ງໃຫຍ່ກວ່າໝູ່

# 1 ໂກຣິນໂທ ບົດທີ 14

14:1 ໃຫ້ມຸ້ງຕາມຄວາມຮັກແບບຂອງພຣະເຈົ້ານັ້ນໄວ້ເດີ້ ແລ້ວກໍໃຫ້ປາດຖະໜາ
ພົນສະຫວັນພິເສດຝ່າຍວິນຍານອັນດີຢັ້ງມນັ້ນນຳ ຄື ແມ່ນສະເພາະການບັນລະ-
ຍາຍ ພຣະຄຳ ຂອງພຣະເຈົ້າ
14:2 ຍ້ອນວ່າ ຜູ້ໃດທີ່ເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກນັ້ນ ບໍ່ໄດ້ເວົ້າໃຫ້ມະນຸດຟັງ ແຕ່ເຂົາ
ໄດ້ເວົ້າໄປຫາພຣະເຈົ້າ ຍ້ອນບໍ່ມີໃຜເຂົ້າໃຈ ຄືເຂົາເວົ້າແຕ່ແນວລໍ້າເລິກທາງຈິດ-
ວິນຍານ
14:3 ແຕ່ສ່ວນຜູ້ທີ່ບັນລະຍາຍ ພຣະຄຳ ນັ້ນ ໄດ້ເວົ້າໃຫ້ມະນຸດຟັງ ເສີມສ້າງໃຫ້ພີ່-
ນ້ອງຈະເລີນຂຶ້ນ ເຕືອນສະຕິກັບໜຸນໃຈເຂົານຳ
14:4 ຄືສະຫລຸບຄວາມແລ້ວ ຝ່າຍຜູ້ທີ່ເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກນັ້ນກໍໜຸນໃຈແຕ່ໂຕ
ເອງຝ່າຍດຽວ ແຕ່ວ່າຝ່າຍຜູ້ທີ່ບັນລະຍາຍ ພຣະຄຳ ຂອງພຣະເຈົ້ານັ້ນກໍຊ່ອຍເສີມ
ສ້າງໃຫ້ພີ່ນ້ອງກຸ່ມຜູ້ເຊື່ອຈະເລີນຂຶ້ນ
14:5 ຄັນພວກເຈົ້າຄູ່ຄົນເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກກໍດີຢູ່ ແຕ່ແຮງຊິດີກວ່ານັ້ນອີກ
ຂ້ອຍຢາກໃຫ້ພວກເຈົ້າບັນລະຍາຍ ພຣະຄຳ ຂອງພຣະເຈົ້າ ຍ້ອນວ່າຜູ້ທີ່ບັນລະ-
ຍາຍ ພຣະຄຳ ນັ້ນ ກໍໃຫຍ່ສຳຄັນກວ່າຜູ້ທີ່ເວົ້າພາສາອື່ນໆ ເວັ້ນແຕ່ຊິມີຜູ້ແປນຳ
ເພື່ອກຸ່ມຜູ້ເຊື່ອຊິໄດ້ຮັບການເສີມສ້າງໃຫ້ຈະເລີນຂຶ້ນ
14:6 ນີ້ເນາະ ພີ່ນ້ອງທັງຫລາຍ ເອີຍ ຄັນຂ້ອຍມາຫາພວກເຈົ້າ ມາເວົ້າແຕ່ພາສາ
ອື່ນໆ ທີ່ເຈົ້າບໍ່ຮູ້ຈັກ ມັນຊິມີປະໂຫຍດອີຫຍັງກັບເຈົ້າ ຄືມັນຊິບໍ່ມີຄວາມໝາຍດອກ
ນອກຈາກວ່າຂ້ອຍຊິເວົ້າແບບວ່າ ເຜີຍ ພຣະຄຳ ອອກມາ ຫລືໃຫ້ຄວາມອ້ອມຮູ້
ຫລືບັນລະຍາຍ ພຣະຄຳ ຫລືສອນຫລັກຂໍ້ເຊື່ອ
14:7 ຄື ແມ່ນແຕ່ເຄື່ອງດົນຕີແນວທີ່ບໍ່ມີຊີວິດ ບໍ່ວ່າຊິເປັນປີ່ກໍດີ ຫລືພິນເຂົາຄູ່ກໍຢ່າ
ບັດມັນສົ່ງສຽງ ຄັນວ່າສຽງນັ້ນບໍ່ຊັດເຈນ ໃຜຊິຮູ້ໄດ້ວ່າມັນເປົ່າຫລືດີດທຳນອງອີ-
ຫຍັງ

14:8 ຄື ຄັນວ່າແກສົ່ງສຽງຮວມກັນບໍ່ແນ່ຊັດ ໃຜແໜ່ຊິຮູ້ຈັກວ່າ ຄວນກຽມໂຕເພື່ອ
ເຂົ້າສະໜາມຮົບໄດ້ຫລືບໍ່
14:9 ໃນທຳນອງດຽວກັນ ໃຜແໜ່ຊິເຂົ້າໃຈໄດ້ນອກຈາກວ່າພວກເຈົ້າຊິເວົ້າພາສາ
ທີ່ແນ່ຊັດເປັນຕາເຂົ້າໃຈງ່າຍ ບໍ່ຊັ້ນພວກເຈົ້າກໍຊິເວົ້າໄປຕາມລົມຊື່ໆ
14:10 ຄື ໃນໂລກນີ້ມີຫລາຍພາສາ ແລ້ວບໍ່ມີພາສາໃດໆ ທີ່ບໍ່ມີຄວາມໝາຍຂອງ
ແຕ່ລະສຽງ
14:11 ຈັ່ງຊັ້ນ ຄັນຂ້ອຍບໍ່ຮູ້ຈັກຄວາມໝາຍຂອງພາສານັ້ນ ຂ້ອຍຊິເປັນຄືຄົນຕ່າງ-
ຊາດໃນສາຍຕາຂອງເຂົາຜູ້ທີ່ເວົ້ານັ້ນ ແລ້ວເຂົາຜູ້ທີ່ເວົ້ານັ້ນກໍຊິເປັນຄືຄົນຕ່າງ-
ຊາດໃນສາຍຕາຂອງຂ້ອຍຄືກັນ
14:12 ໃນທຳນອງດຽວກັນ ເນື່ອງດ້ວຍວ່າພວກເຈົ້າມີໃຈມຸ້ງຫວັງ ປາດຖະໜາພົບ
ສະຫວັນພິເສດຕ່າງໆ ຝ່າຍວິນຍານ ກໍໃຫ້ເນັ້ນໃນພົບສະຫວັນພິເສດແນວທີ່ຊິ
ເສີມສ້າງໃຫ້ພີ່ນ້ອງກຸ່ມຜູ້ເຊື່ອຈະເລີນຂຶ້ນ
14:13 ຈັ່ງຊັ້ນ ໃຫ້ຜູ້ທີ່ເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກນັ້ນ ອະທິຖານຂໍນຳພຣະເຈົ້າໃຫ້
ສາມາດແປອອກມາໄດ້ນຳ
14:14 ຍ້ອນວ່າ ຄັນຂ້ອຍອະທິຖານ ເວົ້າເປັນພາສາອື່ນໆ ທີ່ບໍ່ຮູ້ຈັກ ຈິດວິນຍານ
ຂອງຂ້ອຍ ອາດ ຊິອະທິຖານຢູ່ ແຕ່ວ່າຜົນຮັບທາງຄວາມເຂົ້າໃຈກໍບໍ່ມີເລີຍຊໍ້າ
14:15 ສະຫລຸບແລ້ວ ຊິວ່າຈັ່ງໃດດີ ຂ້ອຍກໍຊິອະທິຖານເວົ້ານຳພຣະເຈົ້າດ້ວຍຈິດ-
ວິນຍານ ພ້ອມທັງຄວາມເຂົ້າໃຈ ກັບຊິຮ້ອງເພງສັນລະເສີນດ້ວຍຈິດວິນຍານ
ພ້ອມທັງຄວາມເຂົ້າໃຈນຳ
14:16 ບໍ່ຊັ້ນ ຄັນຍົກຍ້ອງພຣະເຈົ້າດ້ວຍທາງຈິດວິນຍານຢ່າງດຽວນັ້ນ ແລ້ວມີຄົນ
ພາຍນອກເຂົ້າມາ ຜູ້ນັ້ນຊິສັນລະເສີນເວົ້າອາເມນນຳເຈົ້າໄດ້ຈັ່ງໃດຄັນເຂົາບໍ່ເຂົ້າ-
ໃຈ
14:17 ແມ່ນວ່າ ເຈົ້າ ອາດ ຊິພວມຂອບໃຈພຣະເຈົ້າຢູ່ ແຕ່ສ່ວນຜູ້ນັ້ນ ເຂົາກໍບໍ່ໄດ້ຮັບ
ການເສີມສ້າງໃຫ້ຈະເລີນຂຶ້ນຈັກໜ່ອຍ
14:18 ຂ້ອຍຂອບໃຈພຣະເຈົ້າຂອງຂ້ອຍ ທີ່ຂ້ອຍເວົ້າພາສາອື່ນໆ ນັ້ນໄດ້ຫລາຍ-
ກວ່າພວກເຈົ້າຄູ່ຄົນ

14:19 ແຕ່ວ່າ ບັດພີ່ນ້ອງກຸ່ມຜູ້ເຊື່ອມາຕຸ້ມໂຮມກັນ ຂ້ອຍຊິເລືອກທີ່ຊິເວົ້າຈັກຫ້າຄຳ
ດ້ວຍຄວາມເຂົ້າໃຈຂອງຂ້ອຍ ເພື່ອຂ້ອຍ ອາດ ຊິສອນຄົນອື່ນໄດ້ ກໍຊິດີກວ່າເວົ້າ
ໝື່ນຄຳເປັນພາສາອື່ນໆ ທີ່ບໍ່ເຂົ້າໃຈ
14:20 ພີ່ນ້ອງທັງຫລາຍ ເອີຍ ຝ່າຍເລື່ອງຄວາມເຂົ້າໃຈ ຢ່າໃຫ້ເປັນເດັກນ້ອຍເລີຍ
ແຕ່ໃຫ້ເປັນຜູ້ໃຫຍ່ເດີ້ ແຕ່ຝ່າຍຄວາມຊົ່ວແນວບໍ່ດີນັ້ນ ກໍໃຫ້ເປັນຄືເດັກນ້ອຍ
ໂລດ ເດີ້
14:21 ຄືໃນກົດບັນຍັດນັ້ນ ໄດ້ມີຄຳຂຽນໄວ້ແລ້ວວ່າ “ພຣະຜູ້ເປັນເຈົ້າເວົ້າວ່າ ‘ແມ່ນ
ແຕ່ເຮົາຊິເວົ້າກັບຊົນຊາດ ອິສະຣາເອນ ນີ້ໂດຍໃຊ້ພາສາກັບໃຊ້ປາກຂອງຄົນ
ຕ່າງຊາດກໍຕາມ ພວກເຂົາຊິບໍ່ຮັບຟັງເຮົາເລີຍ’”
14:22 ຈັ່ງຊັ້ນ ການເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກນັ້ນ ບໍ່ແມ່ນສຳລັບໃຫ້ຜູ້ທີ່ເຊື່ອແລ້ວ
ແຕ່ສຳລັບຜູ້ທີ່ຍັງບໍ່ເຊື່ອ ແຕ່ການບັນລະຍາຍ ພຣະຄຳ ຂອງພຣະເຈົ້ານັ້ນບໍ່ແມ່ນ
ສຳລັບຜູ້ທີ່ຍັງບໍ່ເຊື່ອ ແຕ່ສຳລັບຜູ້ທີ່ເຊື່ອແລ້ວ
14:23 ຈັ່ງຊັ້ນ ຄັ່ນພີ່ນ້ອງກຸ່ມຜູ້ເຊື່ອໝົດຄູ່ຄົນໄດ້ມາຕຸ້ມໂຮມໃນໝ້ອງດຽວກັນ ແລ້ວ
ໝົດຄູ່ຄົນນັ້ນຕ່າງກໍເວົ້າພາສາອື່ນໆ ທີ່ບໍ່ຮູ້ຈັກ ແລ້ວໄດ້ມີຜູ້ລາງຄົນທີ່ບໍ່ຮູ້ເລື່ອງ
ຫລືຜູ້ທີ່ຍັງບໍ່ທັນເຊື່ອໄດ້ເຂົ້າມາຟັງ ບໍ່ແມ່ນເຂົາຊິວ່າພວກເຈົ້າເປັນບ້າໄປແລ້ວບໍ້
14:24 ແຕ່ຄັ່ນຄູ່ຄົນຢູ່ຫັ້ນຕ່າງກໍບັນລະຍາຍ ພຣະຄຳ ຂອງພຣະເຈົ້າ ແລ້ວມີຄົນທີ່
ຍັງບໍ່ທັນເຊື່ອ ຫລືຜູ້ທີ່ບໍ່ຮູ້ເລື່ອງໄດ້ເຂົ້າມາ ບໍ່ແມ່ນເຂົາຊິສຳນຶກໂຕໃນເລື່ອງບາບ
ກັບການພິພາກສານຳຖ້ອຍຄຳນັ້ນບໍ້
14:25 ແລ້ວຄວາມລັບຢູ່ໃນໃຈຂອງເຂົາກໍຊິຖືກເຜີຍອອກຢ່າງເດັ່ນຊັດ ເຂົາຈັ່ງຊິ
ຄຸກເຂົ່າກົ້ມໜ້າລົງດິນ ນະມັດສະການພຣະເຈົ້າ ຍອມຮັບວ່າເພິ່ນຢູ່ນຳພວກເຈົ້າ
ອີຫລີ
14:26 ພີ່ນ້ອງທັງຫລາຍ ເອີຍ ບັດພວກເຈົ້າມາຕຸ້ມໂຮມກັນ ຄູ່ຄົນຕ່າງກໍມີ ເພງສັນ-
ລະເສີນ ມີຄຳສອນ ມີພາສາອື່ນໆ ມີການເປີດເຜີຍ ພຣະຄຳ ມີການແປຄວາມໝ
າຍ ກໍຂໍໃຫ້ເຮັດຄູ່ແນວເພື່ອເປັນການເສີມສ້າງໃຫ້ຈະເລີນຂຶ້ນເດີ້

14:27 ຖ້າຜູ້ໃດຊິມີການເວົ້າພາສາອື່ນໆ ນັ້ນ ກໍໃຫ້ເວົ້າແຄ່ສອງຄົນຫລືຢ່າງຫລາຍ
ກໍບໍ່ໃຫ້ເກີນສາມ ແລ້ວກໍໃຫ້ເວົ້າເທື່ອລະຄົນໃຫ້ເປັນລະບຽບ ແລ້ວກໍໃຫ້ມີອີກຄົນ
ໜຶ່ງເປັນລ່າມແປເດີ້
14:28 ແຕ່ວ່າ ຖ້າບໍ່ມີໃຜທີ່ເປັນລ່າມແປ ກໍໃຫ້ຜູ້ທີ່ຊິເວົ້າພາສານັ້ນນັ່ງມິດຢູ່ໃນທີ່ປະ
ຊຸມເດີ້ ແລ້ວໃຫ້ເຂົາເວົ້າກັບໂຕເອງໃນໃຈ ກັບຕໍ່ພຣະເຈົ້າຊະເດີ້
14:29 ແລ້ວຝ່າຍພວກຜູ້ບັນລະຍາຍ ພຣະຄຳ ຂອງພຣະເຈົ້ານັ້ນ ກໍໃຫ້ເວົ້າສອງຫລື
ສາມຄົນ ແລ້ວໃຫ້ຄົນໃນທີ່ປະຊຸມພິຈາລະນາເອົາໃນແນວທີ່ເຂົາເວົ້ານັ້ນເດີ້
14:30 ແລ້ວຖ້າມີແນວໃດທີ່ເປີດເຜີຍໃຫ້ອີກຜູ້ອື່ນທີ່ນັ່ງຢູ່ຫັ້ນ ກໍໃຫ້ຄົນທີ່ພວມເວົ້າ
ເຊົາຊະກ່ອນ
14:31 ຄືຄູ່ຄົນທີ່ບັນລະຍາຍ ພຣະຄຳ ຂອງພຣະເຈົ້າກໍເວົ້າໄດ້ແຕ່ລະຄົນ ເພື່ອທີ່ປະ
ຊຸມຊິໄດ້ຮຽນຮູ້ ກັບໄດ້ຮັບການເລົ້າໂລມໜູນໃຈນຳ
14:32 ຄືຈິດວິນຍານຂອງຜູ້ບັນລະຍາຍ ພຣະຄຳ ຂອງພຣະເຈົ້າແຕ່ລະຄົນນັ້ນ ກໍຢູ່
ໃຕ້ການຄວບຄຸມຂອງໂຕເຂົາເອງ
14:33 ດ້ວຍວ່າ ພຣະເຈົ້າບໍ່ແມ່ນພຣະເຈົ້າແຫ່ງຄວາມສັບສົນວຸ້ນວາຍ ແຕ່ເປັນ
ພຣະເຈົ້າແຫ່ງຄວາມສະຫງົບຮຽບຮ້ອຍ ຄືກັນກັບທີ່ມີຢູ່ໃນພີ່ນ້ອງກຸ່ມຜູ້ເຊື່ອຄົນ
ຂອງພຣະເຈົ້າຢູ່ໝ້ອງອື່ນໆ ນຳ
14:34 ຈັ່ງຊັ້ນ ກໍໃຫ້ພວກແມ່ຍິງມິດຊະ ບໍ່ໃຫ້ເວົ້າກາງທີ່ປະຊຸມຂອງກຸ່ມຜູ້ເຊື່ອ ຍ້ອນ
ພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ເວົ້າ ແຕ່ໃຫ້ນາງຍອມຢູ່ໃຕ້ການຄວບຄຸມຄືກັນ-
ກັບທີ່ກົດບັນຍັດສັ່ງໄວ້ນັ້ນ
14:35 ແລ້ວຖ້າພວກນາງຢາກຮູ້ຈັກເລື່ອງອິຫຍັງ ກໍໃຫ້ນາງຄອຍຖ້າຖາມຜົວໂຕ
ເອງຢູ່ເຮືອນ ຍ້ອນວ່າມັນເປັນເລື່ອງລະອາຍອັນບໍ່ສົມຄວນໃຫ້ພວກແມ່ຍິງຊຸມກັນ
ກາງທີ່ປະຊຸມຂອງກຸ່ມຜູ້ເຊື່ອ
14:36 ຫລືວ່າ ພຣະຄຳ ຂອງພຣະເຈົ້າເລີ່ມທີ່ພວກເຈົ້າບໍ້ ຫລືວ່າໄດ້ມາເຖິງພວກ
ເຈົ້າແຕ່ພວກດຽວບໍ້

14:37 ຄັນຜູ້ໃດຖືວ່າໂຕເປັນຜູ້ບັນລະຍາຍ ພຣະຄຳ ຂອງພຣະເຈົ້າ ຫລືວ່າເປັນຜູ້ທີ່
ຢູ່ຝ່າຍວິນຍານ ກໍໃຫ້ເຂົາຍອມຮັບກັນວ່າ ແນວທີ່ຂ້ອຍໄດ້ຂຽນມາໃຫ້ເຈົ້ານີ້ ເປັນ
ຄຳສັ່ງຈາກພຣະຜູ້ເປັນເຈົ້າເດີ້
14:38 ແຕ່ຄັນຜູ້ໃດບໍ່ຮູ້ຈັກຫຍັງ ກໍໃຫ້ເຂົາໂງ່ຕໍ່ໄປເລີຍເດີ້
14:39 ຈັ່ງຊັ້ນ ພີ່ນ້ອງທັງຫລາຍ ເອີຍ ໃຫ້ປາດຖະໜາທີ່ຊິເປັນຜູ້ບັນລະຍາຍ ພຣະ-
ຄຳ ຂອງພຣະເຈົ້າເດີ້ ແລ້ວບໍ່ຄວນຫ້າມການເວົ້າພາສາອື່ນໆ ເດີ້
14:40 ຈັ່ງໃດກໍຕາມ ໃຫ້ໝົດຄູ່ອັນຄູ່ແນວທີ່ຊິເຮັດນັ້ນເປັນລະບຽບຮຽບຮ້ອຍຕາມທີ່
ສົມຄວນເດີ້

# 1 ໂກຣິນໂທ ບົດທີ 15

15:1 ນອກຈາກຫັ້ນອີກ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍຂໍຢືນຢັນເຖິງຂ່າວປະເສີດທີ່
ໃຫ້ໄວ້ກັບພວກເຈົ້າແລ້ວນັ້ນ ວ່າເປັນຂ່າວປະເສີດອັນຕົ້ນສະບັບ ທີ່ຂ້ອຍໄດ້ມາ
ປະກາດໃຫ້ກັບພວກເຈົ້າແຕ່ທຳອິດນັ້ນ ຊຶ່ງພວກເຈົ້າໄດ້ຮັບເອົາໄວ້ແລ້ວ ທີ່ພວກ
ເຈົ້າຍັງຢືນຢູ່ຢ່າງໝັ້ນຄົງ
15:2 ຊຶ່ງພວກເຈົ້າໄດ້ລອດພົ້ນແລ້ວດ້ວຍຂ່າວປະເສີດນັ້ນ ຄັນແມ່ນພວກເຈົ້າໄດ້
ເຊື່ອຖືເອົາໄວ້ໃນຄຳສອນທີ່ຂ້ອຍໄດ້ປະກາດໄວ້ໃຫ້ພວກເຈົ້າແລ້ວນັ້ນ ນອກຈາ
ກວ່າພວກເຈົ້າຮັບເຊື່ອແຕ່ປາກຊື່ໆ
15:3 ຄືເລື່ອງຂ່າວປະເສີດທີ່ຂ້ອຍໄດ້ນຳມາປະກາດໃຫ້ພວກເຈົ້ານັ້ນ ເປັນຂ່າວທີ່
ຂ້ອຍໄດ້ຮັບມອບມາແລ້ວ ວ່າ ພຣະຄຣິດ ໄດ້ຕາຍ ຮັບແບກໂທດບາບແທນຄົນ
ເຮົາທັງຫລາຍ ຕາມ ພຣະຄຳ ນັ້ນ
15:4 ແລ້ວສົບຂອງເພິ່ນໄດ້ຖືກມ້ຽນໄວ້ໃນອຸບໂມງ ແລ້ວເພິ່ນຈັ່ງເປັນຂຶ້ນມາຈາກ
ຕາຍໃນມື້ທີ່ສາມ ຕາມ ພຣະຄຳ ຂອງພຣະເຈົ້າແລ້ວນັ້ນ
15:5 ແລ້ວ ເກຟາ ( ເປໂຕ )ກໍໄດ້ຮັບໄດ້ເຫັນເພິ່ນ ແລ້ວຕໍ່ມາ ພວກທູດພິເສດສິບ
ສອງຄົນນັ້ນໄດ້ຮັບໄດ້ເຫັນເພິ່ນນຳ
15:6 ຫລັງຈາກນັ້ນ ມີພວກພີ່ນ້ອງຫ້າຮ້ອຍກວ່າຄົນ ໄດ້ເຫັນເພິ່ນພ້ອມກັນ ຊຶ່ງຄົນ
ສ່ວນຫລາຍນັ້ນ ເຂົາກໍຍັງຢູ່ຈົນຮອດຄູ່ມື້ນີ້ ແຕ່ຜູ້ລາງຄົນໄດ້ລ່ວງຫລັບໄປແລ້ວ

15:7 ພາຍຫລັງນັ້ນ ຢາໂກໂບ ໄດ້ຮັບໄດ້ເຫັນເພິ່ນ ແລ້ວທູດພິເສດທັງໝົດກໍໄດ້ຮັບ
ໄດ້ເຫັນເພິ່ນນຳ
15:8 ສຸດທ້າຍໂຕຂ້ອຍເອງກໍໄດ້ຮັບໄດ້ເຫັນເພິ່ນນຳ ຄືກັນກັບຜູ້ທີ່ເກີດຜິດຍາມ
15:9 ຄືຂ້ອຍນີ້ ເປັນຜູ້ນ້ອຍໆທີ່ສຸດໃນພວກທູດພິເສດ ຈັ່ງບໍ່ສົມຄວນຊິໄດ້ຊື່ວ່າເປັນ
ທູດພິເສດເລີຍ ຍ້ອນວ່າໂຕຂ້ອຍເອງເຄີຍຂົ່ມເຫງທໍລະມານກຸ່ມຜູ້ເຊື່ອຂອງພຣະ-
ເຈົ້າມາກ່ອນ
15:10 ແຕ່ວ່າ ຂ້ອຍເປັນຢູ່ໄດ້ຄືກັນກັບຄູ່ມື້ນີ້ ກໍຍ້ອນພຣະກະລຸນາທິຄຸນຂອງພຣະ-
ເຈົ້າ ແລ້ວພຣະກະລຸນາທິຄຸນຂອງເພິ່ນຕໍ່ຂ້ອຍ ກໍບໍ່ໄດ້ໝົດປະໂຫຍດເລີຍ ຍ້ອນ
ວ່າຂ້ອຍໄດ້ເຮັດການງານຂອງເພິ່ນຫລາຍກວ່າພວກທູດພິເສດຄົນອື່ນໆ ແລ້ວ
ມັນບໍ່ແມ່ນໂຕຂ້ອຍດອກ ແຕ່ເປັນພຣະກະລຸນາທິຄຸນຂອງພຣະເຈົ້າທີ່ດຳລົງຢູ່ກັບ
ໂຕຂ້ອຍ
15:11 ຈັ່ງຊັ້ນແມ່ນໂຕຂ້ອຍກໍດີ ຫລືພວກທູດພິເສດນັ້ນກໍດີ ເຮົາທັງຫລາຍຈັ່ງໄດ້
ປະກາດຢ່າງທີ່ເວົ້າມານີ້ ແລ້ວພວກເຈົ້າຈັ່ງໄດ້ຮັບເຊື່ອນຳ
15:12 ແຕ່ບັດນີ້ ຄັ່ນພວກເຮົາປະກາດວ່າ ພຣະຄຣິດ ໄດ້ເປັນຂຶ້ນມາຈາກຕາຍແລ້ວ
ເປັນຫຍັງຄືມີຜູ້ລາງຄົນໃນພວກເຈົ້າທີ່ຍັງເວົ້າວ່າ ບໍ່ມີການເປັນຂຶ້ນມາຈາກຕາຍ
ເລີຍ
15:13 ແຕ່ຄັ່ນບໍ່ມີການເປັນຂຶ້ນມາຈາກຕາຍ ຂະໜາດ ພຣະຄຣິດ ເອງ ເພິ່ນກໍຊິບໍ່
ໄດ້ເປັນຂຶ້ນມາຈາກຕາຍຄືກັນ
15:14 ແລ້ວຄັ່ນວ່າ ພຣະຄຣິດ ບໍ່ໄດ້ເປັນຂຶ້ນມາແລ້ວນັ້ນ ການປະກາດຂອງເຮົາກໍ
ໝົດປະໂຫຍດໄປເລີຍ ພ້ອມທັງຄວາມເຊື່ອຂອງພວກເຈົ້ານັ້ນກໍໝົດປະໂຫຍດຄື
ກັນ
15:15 ເອີ້ ຄັ່ນປາກົດວ່າພວກເຮົານີ້ອ້າງພະຍານບໍ່ຈິງເລື່ອງພຣະເຈົ້າ ທີ່ພວກເຮົາ
ປະກາດວ່າເພິ່ນໄດ້ບັນດານໃຫ້ ພຣະຄຣິດ ເປັນຂຶ້ນມາຈາກຕາຍແລ້ວນັ້ນ ທັງໆ
ທີ່ວ່າບໍ່ມີການເປັນຂຶ້ນມາຈາກຕາຍ ສະແດງວ່າພຣະເຈົ້າບໍ່ໄດ້ບັນດານໃຫ້ ພຣະ-
ຄຣິດ ເປັນຂຶ້ນມາຈາກຕາຍຊັ່ນຕີ້

15:16 ຍ້ອນວ່າ ຖ້າຜູ້ທີ່ຕາຍແລ້ວບໍ່ມີການເປັນຂຶ້ນມາ ກໍສະແດງວ່າ ພຣະຄຣິດ ບໍ່
ໄດ້ເປັນຂຶ້ນມາຈາກຕາຍ
15:17 ແລ້ວຖ້າ ພຣະຄຣິດ ບໍ່ໄດ້ເປັນຂຶ້ນມາຈາກຕາຍນັ້ນ ຄວາມເຊື່ອຂອງພວກ
ເຈົ້າກໍບໍ່ມີປະໂຫຍດອີຫຍັງເລີຍ ເຈົ້າກໍຍັງຢູ່ໃນສະພາບບາບຂອງໂຕເອງຄືເກົ່າ
15:18 ແລ້ວຝ່າຍຜູ້ທີ່ລ່ວງຫລັບໄປໃນ ພຣະຄຣິດ ນັ້ນ ພວກເຂົາກໍພິນາດໄປແລ້ວ
15:19 ຄື ຖ້າຄວາມຫວັງທີ່ພວກເຮົາມີໃນ ພຣະຄຣິດ ໃຊ້ໄດ້ໃນຊີວິດນີ້ຢ່າງດຽວ
ພວກເຮົາແຮງເປັນຕາອີຕົນ ຄວນສັງເວດທີ່ສຸດ ກວ່າຄົນອື່ນໆ ໃນມວນມະນຸດ
ເລີຍ
15:20 ແຕ່ວ່າ ບັດນີ້ ພຣະຄຣິດ ເປັນຂຶ້ນມາຈາກຄວາມຕາຍອີຫລີແລ້ວ ກັບເພິ່ນ
ເປັນຜົນແຮກໃນພວກຄົນທັງຫລາຍທີ່ໄດ້ລ່ວງຫລັບໄປນັ້ນ
15:21 ຄືວ່າ ຄວາມຕາຍນັ້ນໄດ້ເຂົ້າມາສູ່ມວນມະນຸດຍ້ອນຄົນຜູ້ໜຶ່ງເປັນເຫດ ແລ້ວ
ໃນທຳນອງດຽວກັນ ການເປັນຂຶ້ນມາຈາກຕາຍນັ້ນ ກໍໄດ້ເຂົ້າມາຍ້ອນຄົນອີກຜູ້
ໜຶ່ງຄືກັນ
15:22 ດ້ວຍວ່າ ໃນບັນພະບຸລຸດ ອາດາມ ນັ້ນ ມວນມະນຸດທັງປວງໄດ້ເຂົ້າສູ່ຄວາມ
ຕາຍຈັ່ງໃດ ໃນ ພຣະຄຣິດ ມະນຸດກໍຊິເຂົ້າສູ່ຊີວິດໄດ້ຈັ່ງຊັ້ນ
15:23 ແຕ່ວ່າມັນຊິເປັນຕາມລຳດັບ ຄື ພຣະຄຣິດ ໄດ້ເປັນຜົນແຮກທີ່ເປັນຂຶ້ນມາ
ຈາກຕາຍ ແລ້ວຜູ້ຄົນທັງຫລາຍທີ່ເປັນຄົນຂອງ ພຣະຄຣິດ ນັ້ນ ຊິໄດ້ເປັນຂຶ້ນມາ
ຕອນຫລັງ ຄືຕອນເພິ່ນຊິສະເດັດກັບມານັ້ນ
15:24 ຕໍ່ຈາກນັ້ນມາຊິເປັນຍຸກສຸດທ້າຍ ຄືເປັນຍາມທີ່ເພິ່ນຊິມອບລາຊະອານາຈັກ
ໄວ້ໃຫ້ກັບພຣະເຈົ້າຜູ້ເປັນພໍ່ ກັບເປັນຍາມທີ່ເພິ່ນຊິປາບປາມການປົກຄອງ ກັບ
ອຳນາດ ພ້ອມອິດທິພົນທັງຫລາຍ ໃຫ້ໝົດສິ້ນສຸດໄປ
15:25 ຍ້ອນວ່າຈຳເປັນແລ້ວທີ່ເພິ່ນຊິຕ້ອງຄອບຄອງ ຈົນກວ່າເພິ່ນໄດ້ປາບປາມໝູ່
ສັດຕູທັງຫລາຍ ໃຫ້ຢູ່ໃຕ້ຝ່າຕີນຂອງເພິ່ນ
15:26 ແລ້ວສັດຕູອັນສຸດທ້າຍທີ່ຊິຖືກທຳລາຍໃຫ້ສິ້ນສຸດໄປນັ້ນ ກໍຄືຄວາມຕາຍ

15:27 ຄື ພຣະເຈົ້າຜູ້ເປັນພໍ່ໄດ້ໂຜດໃຫ້ໝົດຄູ່ແນວຢູ່ໃຕ້ຝ່າຕີນຂອງເພິ່ນແລ້ວ ແຕ່ທີ່
ວ່າ "ໝົດຄູ່ແນວຢູ່ໃຕ້ເພິ່ນ" ໃຫ້ເຂົ້າໃຈວ່າ ໄດ້ຍົກເວັ້ນພຣະເຈົ້າເອງ ຜູ້ທີ່ເຮັດໃຫ້
ການປົກຄອງຂອງຄູ່ແນວນັ້ນຢູ່ໃຕ້ເພິ່ນ
15:28 ແລ້ວບັດຍາມພຣະເຈົ້າຜູ້ເປັນພໍ່ໄດ້ປາບໃຫ້ໝົດຄູ່ແນວໃຫ້ຢູ່ໃຕ້ເພິ່ນແລ້ວ
ບັດນັ້ນ ພຣະບຸດ ເອງກໍຊິຢູ່ໃຕ້ພຣະເຈົ້ານັ້ນນໍາ ຜູ້ເພິ່ນທີ່ປາບໝົດຄູ່ແນວໃຫ້ຢູ່ໃຕ້
ພຣະບຸດ ເພື່ອພຣະເຈົ້າຊິເປັນເອກເປັນປະລະບຽງເໜືອໝົດຄູ່ແນວທັງປວງ
15:29 ບໍ່ຊັ້ນ ຄົນໄດ້ຮັບບັບຕິດສະມາລົງນໍ້າເພື່ອຄົນທີ່ຕາຍແລ້ວຊິເຮັດຈັ່ງໃດ ຄັ່ນ
ແມ່ນບໍ່ມີການເປັນຂຶ້ນມາຂອງຜູ້ຕາຍເລີຍຊໍ້າ ພວກເຂົາຮັບບັບຕິດສະມາລົງນໍ້າ
ແທນຜູ້ຕາຍຍ້ອນຫຍັງຊັ່ນ
15:30 ແລ້ວເປັນຫຍັງພວກເຮົາຈັ່ງຊິຕ້ອງສ່ຽງອັນຕະລາຍ ພໍ້ກັບແນວເປັນພິດເປັນ
ໄພຢູ່ຕະຫລອດຄູ່ຍາມເລີຍ
15:31 ຂ້ອຍຍອມສ່ຽງຊີວິດປະສົບຄວາມຕາຍຄູ່ມື້ ຈັ່ງຢືນຢັນວ່າ ຂ້ອຍມີຄວາມພູມ-
ໃຈຫລາຍໃນພວກເຈົ້າໂດຍທາງພຣະເຢຊູຄຣິດເຈົ້າຂອງພວກເຮົາ
15:32 ຄື ຄັ່ນຂ້ອຍເຄີຍຕໍ່ສູ້ກັບສັດອັນຕະລາຍຢູ່ເມືອງ ເອເຟໂຊ ຕາມຄ່ານິຍົມທາງ
ໂລກ ຂ້ອຍໄດ້ຜົນປະໂຫຍດອີຫຍັງຄັ່ນຄົນຕາຍບໍ່ໄດ້ເປັນຂຶ້ນມາອີກ ເປັນຕາມ
ຖ້ອຍຄໍາວ່າ "ໃຫ້ເຮົາກິນດື່ມເຖີດ ຍ້ອນວ່າມື້ອື່ນເຮົາຊິຕາຍ"
15:33 ຢ່າຫລົງເລີຍ ການຄົບກັບຄົນທຸດຈະລິດ ມັກຊິເຮັດໃຫ້ເສຍນິໄສ
15:34 ແຕ່ໃຫ້ສ່າງນອນຕື່ນໂຕໄປຕາມທາງຊອບທໍາເດີ້ ແລ້ວໃຫ້ເຊົາຕິດຕາມທາງ
ຜິດບາບຊະເດີ້ ຍ້ອນວ່າຍັງມີຫລາຍຄົນທີ່ຍັງບໍ່ຮູ້ຈັກກັບພຣະເຈົ້າເລີຍ ທີ່ຂ້ອຍ
ເວົ້າຈັ່ງຊີ້ ກໍໃຫ້ພວກເຈົ້າລະອາຍໃຈ
15:35 ແຕ່ ອາດ ມີຄົນຊິຖາມວ່າ "ຜູ້ທີ່ຕາຍໄປແລ້ວນັ້ນ ເຂົາຊິເປັນຂຶ້ນມາແນວໃດ
ແລ້ວບັດເປັນຂຶ້ນມານັ້ນ ຮ່າງກາຍເຂົາຊິເປັນລັກສະນະແບບໃດ"
15:36 ໂອ້ ພວກຄົນໂງ່ເອີຍ ເມັດເຂົ້າທີ່ເຈົ້າຫວ່ານລົງຫັ້ນ ຄັ່ນບໍ່ຕາຍກ່ອນ ມັນຊິ
ແຕກຕາງອກຂຶ້ນມາໃໝ່ໄດ້ຈັ່ງໃດ
15:37 ແລ້ວເມັດເຂົ້າທີ່ເຈົ້າຫວ່ານລົງຫັ້ນ ເຈົ້າກໍບໍ່ໄດ້ຫວ່ານລົງເປັນລັກສະນະຕົ້ນທີ່
ຊິງອກຂຶ້ນມານັ້ນ ແຕ່ໄດ້ຫວ່ານແຄ່ເປັນເມັດຊື່ໆ

15:38 ແຕ່ພຣະເຈົ້າເພິ່ນໄດ້ໃຫ້ເມັດພືດນັ້ນມີຮູບມີຮ່າງຂອງແຕ່ລະແນວຕາມທີ່ເພິ່ນ
ໄດ້ກຳນົດໄວ້ ຄືໃຫ້ຕາມຊະນິດຂອງໃຜຂອງມັນໝົດ
15:39 ແລ້ວລັກສະນະຂອງເນື້ອເລືອດແຕ່ລະແນວກໍບໍ່ຄືກັນ ຄືຂອງຄົນກໍແນວໜຶ່ງ
ຂອງພວກສັດສີ່ຕີນກໍແນວໜຶ່ງ ຂອງໂຕປາກໍແນວໜຶ່ງ ແລ້ວຂອງພວກນົກກໍອີກ
ແນວໜຶ່ງ
15:40 ແລ້ວກໍມີຮ່າງກາຍອຳມະຕະທີ່ເໝາະສຳລັບສະຫວັນກໍດີ ກັບຮ່າງກາຍອະນິ-
ຈັງທີ່ເໝາະສຳລັບໂລກກໍດີ ແຕ່ສັກສີຂອງຮ່າງກາຍສຳລັບສະຫວັນກໍເປັນແນວ
ໜຶ່ງ ກັບສັກສີຂອງຮ່າງກາຍສຳລັບໂລກກໍເປັນອີກແນວໜຶ່ງ
15:41 ແລ້ວມີສັກສີຂອງດວງຕະເວັນກໍແນວໜຶ່ງ ສັກສີຂອງດວງຈັນກໍແນວໜຶ່ງ
ແລ້ວສັກສີຂອງໝູ່ດວງດາວກໍແນວໜຶ່ງ ແຕ່ສັກສີຂອງໝູ່ດາວກໍບໍ່ຄືກັນແຕ່ລະ
ດວງ ມີແສງຂອງໃຜຂອງມັນໝົດຄູ່ດວງ
15:42 ແລ້ວການເປັນຂຶ້ນມາຈາກຕາຍນັ້ນກໍຄືກັນ ຕອນທີ່ຫວ່ານລົງຫັ້ນເປັນຂອງ
ເນົ່າເປື່ອຍ ແຕ່ບັດໄດ້ເປັນຂຶ້ນມານັ້ນ ມັນກໍບໍ່ຮູ້ຈັກເນົ່າເປື່ອຍ
15:43 ແນວທີ່ຖືກຫວ່ານລົງກໍບໍ່ມີສັກສີ ແຕ່ແນວທີ່ເປັນຂຶ້ນມານັ້ນກໍຊິມີສັກສີຫລາຍ
ກັບແນວທີ່ຫວ່ານລົງຫັ້ນອ່ອນກຳລັງແລ້ວ ແຕ່ແນວທີ່ເປັນຂຶ້ນມາໃໝ່ກໍຊິມີລິດ
ກຳລັງຫລາຍ
15:44 ແນວທີ່ຫວ່ານລົງຫັ້ນກໍເປັນແຄ່ຮ່າງກາຍທຳມະດາໂລກຊື່ໆ ແຕ່ແນວທີ່ເປັນ
ຂຶ້ນມານັ້ນກໍຊິເປັນຮ່າງຝ່າຍວິນຍານ ຄືວ່າ ຮ່າງກາຍທຳມະດາໂລກນີ້ກໍມີ ກັບ
ຮ່າງຝ່າຍວິນຍານກໍມີ
15:45 ຄືກັນກັບມີຂຽນໄວ້ແລ້ວວ່າ “ ອາດັມ ຄົນຜູ້ແຮກນັ້ນຖືກສ້າງຂຶ້ນມາໃຫ້ເປັນຜູ້
ມີຊີວິດ” ແຕ່ວ່າ ອາດັມ ຜູ້ສຸດທ້າຍນັ້ນຄື ພຣະເຢຊູຄຣິດ ເປັນວິນຍານຜູ້ທີ່ໂຜດ-
ໃຫ້ຊີວິດ
15:46 ແຕ່ວ່າ ຊິ່ງມາກ່ອນນັ້ນ ບໍ່ໄດ້ເປັນຝ່າຍວິນຍານ ແຕ່ເປັນແນວທຳມະດາ ແລ້ວ
ຊິ່ງເປັນຝ່າຍວິນຍານນັ້ນ ໄດ້ມາຕອນຫລັງ
15:47 ຄົນທຳອິດນັ້ນມາຈາກດິນ ຢູ່ຝ່າຍດິນ ແຕ່ຄົນຜູ້ທີ່ສອງນັ້ນກໍເປັນພຣະຜູ້ເປັນ-
ເຈົ້າຜູ້ທີ່ສະເດັດລົງມາຈາກສະຫວັນ

15:48 ຄືຜູ້ນັ້ນທີ່ມາຈາກດິນເປັນຈັ່ງໃດ ຄູ່ຄົນທີ່ມາຈາກດິນກໍເປັນຈັ່ງຊັ້ນ ແລ້ວຜູ້ນັ້ນ
ທີ່ຢູ່ຝ່າຍສະຫວັນເປັນຈັ່ງໃດ ຄູ່ຄົນທີ່ຢູ່ຝ່າຍສະຫວັນກໍເປັນຈັ່ງຊັ້ນ
15:49 ກັບວ່າ ຊຶ່ງພວກເຮົາມີພາບລັກຄືກັນກັບຜູ້ທີ່ມາຈາກດິນ ໃນອະນາຄົດພວກ
ເຮົາກໍຊິມີພາບລັກຄືກັນກັບຜູ້ທີ່ມາຈາກສະຫວັນ
15:50 ແຕ່ບັດນີ້ ພີ່ນ້ອງທັງຫລາຍ ເອີຍ ຂ້ອຍວ່າ ເນື້ອກັບເລືອດນັ້ນ ບໍ່ສາມາດທີ່ຊິ
ຮັບລາຊະອານາຈັກຂອງພຣະເຈົ້າເປັນມໍລະດົກໄດ້ ແລ້ວໃນທຳນອງດຽວກັນ
ແນວອະນິຈັງທີ່ຮູ້ຈັກເປື່ອຍເນົ່າໄປຫັ້ນ ບໍ່ສາມາດຮັບເອົາແນວອຳມະຕະຊຶ່ງບໍ່ຮູ້-
ຈັກເປື່ອຍເນົ່າເປັນມໍລະດົກໄດ້ຄືກັນ
15:51 ນີ້ແຫລະ ຂ້ອຍມີແນວລໍ້າເລິກທີ່ຊິບອກພວກເຈົ້າ ຄືພວກເຮົາໝົດຄູ່ຄົນຊິບໍ່
ໄດ້ລ່ວງຫລັບໄປ ແຕ່ວ່າພວກເຮົາໝົດຄູ່ຄົນຊິໄດ້ຮັບການປ່ຽນສະພາບໃໝ່
15:52 ຄືໃນແວບດຽວ ໃນພິບຕາດຽວ ຊິມີການເປົ່າແກເປັນເທື່ອສຸດທ້າຍ ຄືແກນັ້ນ
ຊິສົ່ງສຽງອອກມາ ແລ້ວຄົນຜູ້ທີ່ຕາຍແລ້ວໃນ ພຣະຄຣິດ ຊິໄດ້ເປັນຂຶ້ນມາໃນສະ-
ພາບອຳມະຕະທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລ້ວພວກເຮົາທີ່ຍັງຢູ່ກໍຊິໄດ້ຮັບການປ່ຽນ
ແປງໃໝ່ນຳ
15:53 ຄືແນວອະນິຈັງທີ່ເປື່ອຍເນົ່ານີ້ ຊິຕ້ອງສວມສະພາບອຳມະຕະທີ່ບໍ່ຮູ້ຈັກ
ເປື່ອຍເນົ່າ ກັບແນວທີ່ຮູ້ຈັກຕາຍນີ້ ກໍຕ້ອງສວມສະພາບແນວທີ່ບໍ່ຮູ້ຈັກຕາຍ
15:54 ເພື່ອໃຫ້ເປັນວ່າ ບັດແນວຊຶ່ງເປື່ອຍເນົ່າເປັນ ໄດ້ສວມສະພາບແນວຊຶ່ງ
ເປື່ອຍເນົ່າບໍ່ເປັນ ກັບບັດແນວຊຶ່ງຮູ້ຈັກຕາຍ ໄດ້ສວມສະພາບແນວທີ່ບໍ່ຮູ້ຈັກຕາຍ
ໃນບັດນັ້ນ ກໍຊິສຳເລັດຕາມ ພຣະຄຳ ທີ່ມີຂຽນໄວ້ວ່າ “ຄວາມຕາຍໄດ້ຖືກກືນໄປ
ແລ້ວໂດຍການມີໄຊ”
15:55 ໂອ້ ຄວາມຕາຍເອີຍ ການຕອດຂອງເຈົ້າຢູ່ໃສ ໂອ້ ຊຸມນະລົກເອີຍ ການມີ
ໄຊຂອງເຈົ້າຢູ່ໃສ
15:56 ການຕອດຂອງຄວາມຕາຍນັ້ນ ກໍຄືບາບ ກັບລິດອຳນາດຂອງບາບນັ້ນ ກໍຄື
ກົດບັນຍັດ
15:57 ແຕ່ສາທຸການພຣະເຈົ້າ ຜູ້ເພິ່ນໃຫ້ຄົນເຮົາມີໄຊ ໂດຍພຣະເຢຊູຄຣິດເຈົ້າຂອງ
ພວກເຮົາ

15:58 ຈັ່ງຊັ້ນ ພີ່ນ້ອງທີ່ຮັກຂອງຂ້ອຍ ເອີຍ ໃຫ້ພວກເຈົ້າດຳລົງຢູ່ຢ່າງໝັ້ນຄົງເດີ້ ບໍ່ມີ
ການຫວັ່ນໄຫວເລີຍ ໂດຍໃສ່ໃຈຢູ່ຄູ່ຍາມຢ່າງເຫລືອລົ້ນໃນການງານຂອງພຣະ-
ຜູ້ເປັນເຈົ້າ ດ້ວຍພວກເຈົ້າຮູ້ຢູ່ແລ້ວວ່າ ການງານທີ່ພວກເຈົ້າເຮັດໂດຍໃນອົງ-
ພຣະຜູ້ເປັນເຈົ້ານັ້ນ ຊິບໍ່ໄດ້ບໍ່ປະໂຫຍດເລີຍ

## 1 ໂກຣິນໂທ ບົດທີ 16

16:1 ບັດນີ້ ໃນເລື່ອງການເກັບຊັບທີ່ຖວາຍເພື່ອຊ່ອຍພີ່ນ້ອງຄົນຂອງພຣະເຈົ້າທີ່
ຕົກທຸກໄດ້ຍາກນັ້ນ ຂ້ອຍໄດ້ສັ່ງພີ່ນ້ອງກຸ່ມຜູ້ເຊື່ອທີ່ຢູ່ແຄວ້ນ ຄາລາເຕຍ ໄວ້ຈັ່ງຊີ້
ແລ້ວໃຫ້ພວກເຈົ້າເຮັດຄືກັນເດີ້
16:2 ຄື ໃນມື້ແຮກຂອງອາທິດຂອງຄູ່ອາທິດ ໃຫ້ພວກເຈົ້າຄູ່ຄົນເກັບຜົນສ່ວນໜຶ່ງ
ຂອງລາຍໄດ້ ຕາມທີ່ພຣະເຈົ້າໄດ້ອວຍພອນເຈົ້າ ໃຫ້ເຮັດແນວນີ້ເພື່ອຊິບໍ່ຕ້ອງ
ຟ້າວຫາເກັບຫາແຜ່ເອົາບັດຍາມຂ້ອຍຊິມາ
16:3 ກັບບັດຂ້ອຍມາຮອດແລ້ວ ຜູ້ທີ່ພວກເຈົ້າເຫັນຊອບຊິຮັບຮອງ ພ້ອມກັບຈົດໝ
າຍຂອງພວກເຈົ້ານັ້ນ ຂ້ອຍກໍຊິໃຊ້ເຂົານຳເອົາຂອງຖວາຍຂອງພວກເຈົ້າ ໄປສົ່ງ
ໃຫ້ພີ່ນ້ອງຢູ່ເມືອງ ເຢຣູຊາເລັມ
16:4 ແລ້ວຄັ່ນເຫັນສົມຄວນຂ້ອຍກໍຊິໄປນຳ ແລ້ວພວກເຂົາກໍຊິໄປນຳຂ້ອຍ
16:5 ບັດຂ້ອຍຂ້າມແຄວ້ນ ມາເກໂດເນຍ ແລ້ວ ຂ້ອຍກໍຊິມາຫາພວກເຈົ້າ ຄື ມາເກ-
ໂດເນຍ ກໍຢູ່ໃນເສັ້ນທາງທີ່ຂ້ອຍຊິເດີນທາງໄປຫັ້ນ
16:6 ແລ້ວຫາລາງເທື່ອຂ້ອຍ ອາດ ຊິພັກຢູ່ນຳພວກເຈົ້າ ຫລືລາງເທື່ອຄັ່ນຮອດລະ-
ດູໜາວຂ້ອຍ ອາດ ຊິຄ້າງແຮມຢູ່ນຳພວກເຈົ້າໄດ້ ກໍເພື່ອພວກເຈົ້າຊິສົ່ງຂ້ອຍໄປ
ທາງທີ່ຂ້ອຍຊິໄປຫັ້ນ
16:7 ຄືຂ້ອຍຊິບໍ່ພໍ້ເຈົ້າບັດຂ້ອຍເດີນທາງຜ່ານມາໃນຂາໄປຫັ້ນ ແຕ່ຂ້ອຍຫວັງຊິ
ແວະມາຄ້າງຢູ່ກັບເຈົ້າໂດນແໜ່ບັດຂາມາ ຄັ່ນພຣະຜູ້ເປັນເຈົ້າໄດ້ໂປດ
16:8 ແຕ່ຂ້ອຍຊິຢູ່ເມືອງ ເອເຟໂຊ ໄວ້ຮອດເທດສະການ ເພັນເຕຄໍສະເຕ
16:9 ໂດຍວ່າ ໄດ້ມີປະຕູເປີດໄວ້ກວ້າງໃຫ້ຂ້ອຍມີໂອກາດປະກາດຢູ່ພູ່ນ ແລ້ວກໍມີ
ສັດຕູຫລາຍນຳ

16:10 ບັດນີ້ ຄັນ ຕີໂມທຽວ ມາຫາພວກເຈົ້າ ກໍໃຫ້ ລາວ ຢູ່ກັບເຈົ້າໂດຍບໍ່ຕ້ອງເຄົາ-
ລົບຍ້ອນຫຍັງເດີ້ ຄື ລາວ ເຮັດງານຂອງພຣະຜູ້ເປັນເຈົ້າຄືກັນກັບຂ້ອຍນີ້
16:11 ຈັ່ງຊັ້ນ ຢ່າໃຫ້ຜູ້ໃດດູໝິ່ນເຂົາເລີຍ ແຕ່ໃຫ້ຊ່ອຍສົ່ງ ລາວ ເດີນທາງໄປໂດຍ
ສະຫວັດດີພາບ ເພື່ອ ລາວ ຊິໄດ້ມາເຖິງຂ້ອຍໂດຍດີ ຍ້ອນຂ້ອຍພວມຄອຍຖ້າ
ລາວ ກັບພວກພີ່ນ້ອງທີ່ມານຳ ລາວ ນັ້ນ
16:12 ແລ້ວບັດນີ້ ສ່ວນ ອາໂປໂລ ພີ່ນ້ອງຂອງພວກເຮົາອີກຜູ້ໜຶ່ງນັ້ນ ຂ້ອຍໄດ້ຊັກ
ຊວນໃຫ້ ລາວ ມາຢ້ຽມຢາມພວກເຈົ້າພ້ອມກັບພວກພີ່ນ້ອງນຳ ແຕ່ໃຈ ລາວ ບໍ່ທັນ
ຢາກມາໃນຍາມນີ້ ບັດໂອກາດໜ້າ ລາວ ຈັ່ງຄ່ອຍຊິມາ
16:13 ໃຫ້ພວກເຈົ້າລະວັງໄວ້ໃຫ້ດີເດີ້ ໃຫ້ໝັ້ນຄົງໃນຄວາມເຊື່ອນຳເດີ້ ມີໃຈກ້າ-
ຫານ ເຂັ້ມແຂງນຳເດີ້
16:14 ແລ້ວໝົດຄູ່ແນວທີ່ພວກເຈົ້າເຮັດນັ້ນ ກໍໃຫ້ເຮັດດ້ວຍຄວາມຮັກເດີ້
16:15 ຂ້ອຍຂໍຮ້ອງຕໍ່ພີ່ນ້ອງ ເອີຍ (ພວກເຈົ້າຮູ້ແລ້ວ ວ່າຄອບຄົວຂອງ ສະເຕຟາ-
ນາ ໄດ້ຮັບເຊື່ອເປັນຜົນແຮກໃນແຄວັນ ອະຂາຢາ ພວກເຂົາຈັ່ງໄດ້ເອົາໃຈໃສ່ມີ
ຄວາມຍິນດີໃນການຮັບໃຊ້ຄົນທັງຫລາຍຂອງພຣະເຈົ້າ)
16:16 ຄືຂ້ອຍຂໍໃຫ້ພວກເຈົ້າຖ່ອມໃຈຮັບໃຊ້ພີ່ນ້ອງຄົນຂອງພຣະເຈົ້າແນວນັ້ນ ຄື
ເຂົາຊ່ອຍໃນງານພຣະເຈົ້ານຳກັນກັບພວກຂ້ອຍເດີ້
16:17 ຂ້ອຍກໍດີໃຈຫລາຍທີ່ ສະເຕຟານາ ກັບ ໂຟຕູນາໂຕ ກັບ ອະຂາອີໂກ ໄດ້
ມາຫາແລ້ວ ຄືພວກເຂົາໄດ້ຊ່ອຍທົດແທນເພີ່ມສ່ວນການຖວາຍທີ່ພວກເຈົ້າຂາດ
ນັ້ນ
16:18 ຄືພວກເຂົາໄດ້ຊ່ອຍໜູນໃຈຈິດວິນຍານຂອງຂ້ອຍ ພ້ອມທັງຈິດວິນຍານຂອງ
ພວກເຈົ້ານຳ ຈັ່ງຊັ້ນ ໃຫ້ພວກເຈົ້າຍອມຮັບນັບຖືຄົນຈັ່ງພວກນີ້ເດີ້
16:19 ກັບວ່າ ພີ່ນ້ອງກຸ່ມຜູ້ເຊື່ອທັງຫລາຍໃນແຄວັນ ອາເຊຍ ຝາກຄວາມຄຶດຮອດ
ມາຍັງພວກເຈົ້ານຳ ແລ້ວ ອາກິລາ ກັບ ປີຊະກີລາ ພ້ອມກັບພີ່ນ້ອງກຸ່ມຜູ້ເຊື່ອທີ່
ຕຸ້ມໂຮມກັນຢູ່ເຮືອນຂອງເຂົາ ກໍໄດ້ຝາກຄວາມຄຶດຮອດໃນອົງພຣະຜູ້ເປັນເຈົ້າ
ມາຍັງພວກເຈົ້າດ້ວຍຄວາມຍິນດີນຳ

16:20 ແລ້ວພີ່ນ້ອງຄູ່ຄົນຢູ່ນີ້ ໄດ້ຝາກຄວາມຄຶດຮອດຄຶດເຖິງມາຍັງພວກເຈົ້ານຳ
ໃຫ້ພວກເຈົ້າທັກທາຍກັນແລະກັນດ້ວຍນ້ຳໃຈອັນບໍລິສຸດເດີ້
16:21 ຂ້ອຍຂຽນຄຳລົງທ້າຍນີ້ໂດຍລາຍມືຂອງຂ້ອຍ ໂປໂລ ເອງ
16:22 ຄັນຜູ້ໃດບໍ່ຮັກແພງພຣະເຢຊູຄຣິດເຈົ້າ ກໍຂໍໃຫ້ເຂົາຜູ້ນັ້ນຖືກພຣະເຈົ້າສາບ-
ແຊ່ງເດີ້ ຂໍໄດ້ມາໃນໄວໆ ນີ້ ພຣະຜູ້ເປັນເຈົ້າເອີຍ
16:23 ຂໍໃຫ້ພຣະກະລຸນາທິຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ ດຳລົງຢູ່ກັບ
ພວກເຈົ້າເຖີດ
16:24 ແລ້ວສຸດທ້າຍນີ້ ຂ້ອຍຂໍຝາກຄວາມຮັກແພງຫລາຍມາຍັງພວກເຈົ້າໃນອົງ
ພຣະເຢຊູຄຣິດ ອາເມນ

*[ຈົດໝາຍສະບັບແຣກນີ້ ທ່ານອາຈານ ໂປໂລ ໄດ້ຂຽນໄປຍັງພີ່ນ້ອງຊາວ ໂກຣິນໂທ ຈາກເມືອງ ຟີລິບປອຍ ກັບນຳສົ່ງໂດຍ ສະເຕຟານາ ໂຟຕູນາໂຕ ອະຂາອີໂກ ກັບ ຕີໂມທຽວ ]*

# 2 ໂກຣິນໂທ

## 2 ໂກຣິນໂທ ບົດທີ 1

1:1 ຈາກ ໂປໂລ ຜູ້ເປັນທູດພິເສດຂອງ ພຣະເຢຊູຄຣິດ ຕາມພຣະປະສົງຂອງ
ພຣະເຈົ້າ ກັບຈາກ ຕີໂມທຽວ ນ້ອງຂອງພວກເຮົາ ຮຽນພວກພີ່ນ້ອງໃນກຸ່ມຜູ້ເຊື່ອ
ຂອງພຣະເຈົ້າຢູ່ເມືອງ ໂກຣິນໂທ ພ້ອມກັບພີ່ນ້ອງຄົນຂອງພຣະເຈົ້າທັງຫລາຍຜູ້
ຢູ່ທົ່ວແຄວ້ນ ອະຂາຢາ
1:2 ຂໍໃຫ້ພຣະກະລຸນາທິຄຸນກັບສັນຕິພາບຈາກພຣະເຈົ້າ ພໍ່ຂອງພວກເຮົາ ກັບ
ຈາກອົງພຣະເຢຊູຄຣິດເຈົ້າ ດຳລົງຢູ່ກັບພວກເຈົ້າໄວ້ເດີ້
1:3 ຈົ່ງຂໍຂອບໃຈພຣະເຈົ້າ ພໍ່ຂອງພຣະເຢຊູຄຣິດເຈົ້າຂອງຄົນເຮົາ ເປັນພໍ່ຜູ້ສະ-
ແດງຄວາມເມດຕາ ແລ້ວກໍເປັນພຣະເຈົ້າຜູ້ທີ່ໃຫ້ການເລົ້າໂລມໜຸນໃຈໃນໝົດຄູ່
ແນວ
1:4 ຊຶ່ງເພິ່ນໄດ້ເລົ້າໂລມໜຸນໃຈພວກເຮົາໃນຍາມທຸກຍາກຄູ່ແນວຂອງພວກເຮົາ
ນັ້ນ ເພື່ອພວກເຮົາຊິໄດ້ເລົ້າໂລມໜຸນໃຈຄົນອື່ນໆ ນຳ ຜູ້ທີ່ມີຄວາມທຸກຍາກຕ່າງໆ
ດ້ວຍການເລົ້າໂລມໜຸນໃຈນັ້ນຊຶ່ງພວກເຮົາເອງໄດ້ຮັບຈາກພຣະເຈົ້າ

1:5 ຄືກັນກັບທີ່ຄວາມທຸກຍາກຂອງ ພຣະຄຣິດ ໄດ້ຫລັ່ງໄຫລເຂົ້າມາສູ່ຊີວິດຂອງ
ພວກເຮົາຫລາຍສ່ຳໃດ ໃນທຳນອງດຽວກັນ ການເລົ້າໂລມໜຸນໃຈທີ່ເຮົາໄດ້ຮັບ
ມາຈາກ ພຣະຄຣິດ ກໍລົ້ນເຂົ້າມາຫລາຍສ່ຳນັ້ນຄືກັນ
1:6 ແລ້ວ ຄັ່ນພວກເຮົາໄດ້ຖືກຄວາມທຸກຍາກ ມັນກໍເພື່ອຄວາມຊູໃຈກັບຄວາມພົ້ນ
ເພື່ອພວກເຈົ້າ ນີ້ກໍເສີມກຳລັງໃຈໃຫ້ພວກເຮົາມີແຮງເພື່ອທົນເອົາໄດ້ຕໍ່ຄວາມທຸກ
ຍາກນັ້ນ ແລ້ວຄັ່ນພວກເຮົາໄດ້ຮັບການເລົ້າໂລມໜຸນໃຈຫລືບໍ່ກໍຕາມ ທີ່ເຮົາທົນ
ເອົານັ້ນກໍເພື່ອຄວາມຊູໃຈກັບຄວາມພົ້ນຂອງພວກເຈົ້າ
1:7 ແລ້ວຄວາມຫວັງທີ່ພວກເຮົາມີໃຫ້ພວກເຈົ້າກໍໝັ້ນຄົງ ຍ້ອນພວກເຮົາຮູ້ກັນວ່າ
ໃນການທີ່ພວກເຈົ້າມີສ່ວນຮ່ວມໃນຄວາມທຸກຍາກຂອງເຮົາສ່ຳໃດ ພວກເຈົ້າກໍຊິ
ມີສ່ວນຮ່ວມໃນການເລົ້າໂລມໜຸນໃຈຂອງພວກເຮົາສ່ຳນັ້ນຄືກັນ
1:8 ພີ່ນ້ອງທັງຫລາຍ ເອີຍ ພວກເຮົາຢາກໃຫ້ພວກເຈົ້າຮູ້ເຖິງຄວາມທຸກຍາກຂອງ
ເຮົາທີ່ເກີດໃນແຄວ້ນ ອາເຊຍ ນັ້ນ ເຮັດໃຫ້ເຮົາໜັກໃຈຈົນເກີນກຳລັງທີ່ຊິທົນເອົາ
ໄດ້ ເຖິງຂະໜາດວ່າພວກເຮົາໝົດຫວັງທີ່ຊິເອົາຊີວິດລອດໄດ້
1:9 ເອີ້ ພວກເຮົາເອງໄດ້ຖືກລົງອາຍາປະຫານຊີວິດ ກໍເພື່ອພວກເຮົາຊິບໍ່ໄດ້ໄວ້ໃຈ
ໃນໂຕເອງ ແຕ່ໄວ້ໃຈໃນພຣະເຈົ້າ ຜູ້ເພິ່ນສາມາດໃຫ້ຄົນຕາຍເປັນຂຶ້ນມາໄດ້
1:10 ຜູ້ໄດ້ຊ່ອຍໃຫ້ພວກເຮົາຫວິດພົ້ນຈາກການຕາຍຢ່າງໂຫດຫ້ຽມນັ້ນມາແລ້ວ
ແລ້ວກໍຍັງຊ່ອຍໃຫ້ພວກເຮົາຫວິດພົ້ນຢູ່ເລື້ອຍໆ ແມ່ນຜູ້ທີ່ພວກເຮົາໄວ້ໃຈກັນວ່າ
ເພິ່ນກໍຍັງຊິຊ່ອຍເຮົາອີກຕໍ່ໆ ໄປນຳ
1:11 ແລ້ວພວກເຈົ້າໄດ້ຊ່ອຍພວກເຮົານຳ ດ້ວຍການອະທິຖານເພື່ອ ແລ້ວໃນທີ່ສຸດ
ມີອີກຫລາຍຄົນຊິໄດ້ຂອບໃຈພຣະເຈົ້າໂດຍຜ່ານທາງພວກເຮົາ ເນື່ອງຈາກຊັບ
ນັ້ນທີ່ຫລາຍຄົນໃນພວກເຈົ້າໄດ້ຖວາຍມາ ເພື່ອເປັນຂອງຂວັນຊ່ອຍພວກເຂົາ
1:12 ຄວາມພູມໃຈຂອງພວກເຮົາເປັນຈັ່ງຊີ້ ຄືໃຈຂອງພວກເຮົາເປັນພະຍານໃນໂຕ
ເອງວ່າ ການທີ່ພວກເຮົາວາງໂຕຢູ່ທາງໂລກນີ້ ກໍເປັນໂດຍການຖວາຍກຽດຕໍ່
ພຣະເຈົ້າດ້ວຍໃຈຈິງ ບໍ່ແມ່ນດ້ວຍໃຊ້ປັນຍາທາງເນື້ອໜັງ ແຕ່ດ້ວຍເຫັນແກ່
ພຣະກະລຸນາທິຄຸນຂອງພຣະເຈົ້າຕໍ່ພວກເຈົ້າຢ່າງເຫລືອລົ້ນ

1:13 ຄືພວກເຮົາບໍ່ໄດ້ຂຽນເລື່ອງອື່ນໆ ມາເຖິງພວກເຈົ້າດອກ ນອກຈາກເລື່ອງທີ່
ພວກເຈົ້າໄດ້ອ່ານກັບໄດ້ຍອມຮັບນັ້ນ ຊຶ່ງຂ້ອຍຫວັງວ່າໃນທີ່ສຸດ ພວກເຈົ້າຊິໄດ້
ເຂົ້າໃຈດີ
1:14 ຄືກັນກັບທີ່ພວກເຈົ້າໄດ້ຍອມຮັບຮູ້ຈັກດີໃນພວກເຮົາມາແລ້ວ ຈັ່ງພູມໃຈກັບ
ພວກເຮົານຳ ຄືກັນກັບທີ່ພວກເຮົາຊິໄດ້ພູມໃຈໃນພວກເຈົ້າໃນມື້ຂອງ ພຣະເຢຊູ-
ເຈົ້າ ທີ່ຊິມານັ້ນ
1:15 ແລ້ວຍ້ອນຄວາມໝັ້ນໃຈທີ່ຂ້ອຍມີໃນເລື່ອງນີ້ ຂ້ອຍມຸ້ງວ່າຊິມາແວະຫາພວກ
ເຈົ້າກ່ອນ ເພື່ອຊິເປັນປະໂຫຍດໃຫ້ພວກເຈົ້າສອງຕໍ່
1:16 ຄືຂ້ອຍຕັ້ງໃຈຊິແວະມາຫາພວກເຈົ້າລະຫວ່າງທີ່ເດີນທາງໄປແຄວັ້ນ ມາເກ-
ໂດເນຍ ແລ້ວບັດຂ້ອຍກັບມາຈາກ ມາເກໂດເນຍ ນັ້ນ ກໍຊິແວະມາຫາພວກເຈົ້າ
ອີກ ແລ້ວກໍຊິໃຫ້ພວກເຈົ້າສົ່ງຂ້ອຍອອກເດີນທາງໄປແຄວັ້ນ ຢູດາຍ
1:17 ຈັ່ງຊັ້ນ ບັດຂ້ອຍຕັ້ງໃຈວ່າຊິມາຫາເຈົ້ານັ້ນ ຂ້ອຍໄດ້ເວົ້າຢ່າງລັງເລໃຈບໍ້ ຫລື
ໃນສິ່ງທີ່ຂ້ອຍມຸ້ງໝາຍຕັ້ງເປົ້າໄວ້ນັ້ນ ຂ້ອຍໄດ້ວາງເປົ້າຕາມເນື້ອໜັງບໍ້ ຄືສຳລັບ
ໂຕຂ້ອຍນີ້ ຄັ່ນວ່າແມ່ນ ຂ້ອຍກໍວ່າແມ່ນ ໂລດ ແລ້ວຄັ່ນວ່າບໍ່ແມ່ນ ຂ້ອຍກໍວ່າບໍ່
ແມ່ນ ໂລດ
1:18 ແຕ່ວ່າ ຕາມທີ່ພຣະເຈົ້າເປັນຜູ້ສັດຈິງສ່ຳໃດ ແນວທີ່ເຮົາເວົ້າກັບພວກເຈົ້າກໍ
ເປັນຄຳສັດຈິງຈັ່ງຊັ້ນ ບໍ່ມີການລັງເລເລີຍ
1:19 ຍ້ອນວ່າ ພຣະບຸດ ຂອງພຣະເຈົ້າຄື ພຣະເຢຊູຄຣິດ ຜູ້ຊຶ່ງພວກຂ້ອຍໄດ້ປະ-
ກາດໃຫ້ພວກເຈົ້ານັ້ນ ຄືໂຕຂ້ອຍເອງ ພ້ອມກັບ ຊີລາວານ ກັບ ຕີໂມທຽວ ນຳ
ແລ້ວພວກເຮົາບໍ່ໄດ້ປະກາດແບບລັງເລຊື່ໆ ແຕ່ດ້ວຍຄວາມໝັ້ນຄົງອັນແນ້ວແນ່
ໃນເພິ່ນ
1:20 ຍ້ອນວ່າຄຳໝັ້ນສັນຍາຂອງພຣະເຈົ້າໃນ ພຣະເຢຊູຄຣິດ ນັ້ນ ກໍລ້ວນແຕ່ໝັ້ນ-
ຄົງແນ້ວແນ່ແມ່ນໝົດຄູ່ຂໍ້ ຍ້ອນເຫດນີ້ເຮົາຈັ່ງເວົ້າວ່າ “ອາເມນ” ເອີ້ ແມ່ນແທ້ ຈັ່ງ
ເປັນເຫດທີ່ເຮົາຖວາຍກຽດແດ່ພຣະເຈົ້າ
1:21 ແລ້ວບັດນີ້ ແມ່ນພຣະເຈົ້າເອງ ເປັນຜູ້ທີ່ໄດ້ເຈີມໄດ້ແຕ່ງຕັ້ງພວກເຮົາໄວ້ໃຫ້
ກັບພວກເຈົ້າຢູ່ໃນ ພຣະຄຣິດ

1:22 ກັບພຣະເຈົ້າເພິ່ນໄດ້ປະທັບຕາພວກເຮົາໄວ້ ກັບໄດ້ໂຜດໃຫ້ ພຣະວິນຍານ
ໄວ້ໃນໃຈຂອງພວກເຮົາ ເປັນຄ່າມັດຈຳຮັບຮອງໄວ້
1:23 ນອກຈາກນັ້ນອີກ ຂ້ອຍຂໍອ້າງພຣະເຈົ້າໃຫ້ເປັນພະຍານຢືນຢັນເຖິງຄວາມຕັ້ງ
ໃຈຂອງຂ້ອຍວ່າ ທີ່ຂ້ອຍຍັງບໍ່ໄດ້ມາເຖິງເມືອງ ໂກຣິນໂທ ນັ້ນ ຍ້ອນຂ້ອຍຢາກ
ເວັ້ນພວກເຈົ້າໄວ້ຊະກ່ອນ
1:24 ບໍ່ແມ່ນວ່າພວກເຮົາເປັນເຈົ້າເປັນນາຍເໜືອຄວາມເຊື່ອຂອງພວກເຈົ້າດອກ
ແຕ່ພວກເຮົາເປັນແຕ່ຜູ້ຮັບໃຊ້ນຳກັນ ເພື່ອເສີມສ້າງຄວາມປິຕິຍິນດີຂອງພວກ
ເຈົ້າ ຄືພວກເຈົ້າຢືນໝັ້ນຢູ່ໄດ້ ຍ້ອນຄວາມເຊື່ອ

## 2 ໂກຣິນໂທ ບົດທີ 2

2:1 ແຕ່ຂ້ອຍໄດ້ມຸ້ງໝາຍໄວ້ໃນໃຈວ່າ ຊິບໍ່ນຳເອົາແນວທີ່ຊິພາໃຫ້ເປັນທຸກຈັ່ງຊີ້ມາ
ຫາພວກເຈົ້າອີກ
2:2 ຍ້ອນວ່າ ຄັ່ນຂ້ອຍພາພວກເຈົ້າໃຫ້ໜັກໃຈເປັນທຸກ ແມ່ນໃຜຊິເລົ້າໂລມໝຸນໃຈ
ຂ້ອຍໃຫ້ຊື່ນບານຍິນດີໄດ້ ນອກຈາກພວກເຈົ້າເອງ ຜູ້ທີ່ຂ້ອຍ ອາດ ຊິຕ້ອງພາ
ເປັນທຸກນັ້ນ
2:3 ແລ້ວທີ່ຂ້ອຍຂຽນມາຫາພວກເຈົ້າແນວນີ້ ກໍເພື່ອວ່າ ບັດຂ້ອຍຊິມາຫານັ້ນ ຂ້ອຍ
ຊິບໍ່ໄດ້ທຸກໃຈຍ້ອນພວກເຈົ້າ ຜູ້ທີ່ຄວນຊິເຮັດໃຫ້ຂ້ອຍມີຄວາມຊື່ນບານຍິນດີ ແຕ່
ຂ້ອຍໝັ້ນໃຈໃນພວກເຈົ້າວ່າ ຄວາມຊື່ນບານຍິນດີທີ່ຂ້ອຍມີຢູ່ນີ້ກໍຊິເປັນຄວາມ
ຍິນດີຂອງພວກເຈົ້າໝົດຄູ່ຄົນນຳ
2:4 ແຕ່ວ່າ ເຫດທີ່ຂ້ອຍຂຽນມາຫາພວກເຈົ້າດ້ວຍຄວາມທຸກໃຈນີ້ ກັບໄດ້ເສຍນ້ຳ
ຕາຫລາຍ ບໍ່ແມ່ນເພື່ອໃຫ້ພວກເຈົ້າເປັນທຸກໃຈນຳ ແຕ່ເພື່ອພວກເຈົ້າ ອາດ ຮູ້ເຖິງ
ຄວາມຮັກແບບຂອງພຣະເຈົ້າທີ່ຂ້ອຍມີໃຫ້ພວກເຈົ້າຢ່າງເຫລືອລົ້ນ
2:5 ແຕ່ຄັ່ນຜູ້ໃດຢູ່ຫັ້ນເປັນເຫດໃຫ້ເກີດມີຄວາມເປັນທຸກ ຜູ້ນັ້ນບໍ່ໄດ້ເຮັດໃຫ້ຂ້ອຍ
ໜັກໃຈເປັນທຸກແຕ່ຜູ້ດຽວ ແຕ່ຜູ້ລາງຄົນໃນພວກເຈົ້າກໍໜັກໃຈເປັນທຸກນຳ ຂ້ອຍ
ກໍເລີຍບໍ່ຢາກຊ້ຳເຕີມພວກເຈົ້າອີກດອກ
2:6 ຄື ທີ່ຄົນສ່ວນຫລາຍໄດ້ພາກັນລົງໂທດຄົນນັ້ນກໍພຽງພໍແລ້ວ

2:7 ບັດນີ້ ໃນທາງກົງກັນຂ້າມ ພວກເຈົ້າຄວນຍົກໂທດໃຫ້ອະໄພຜູ້ນັ້ນຕ່າງຫາກ
ແລ້ວກໍເລົ້າໂລມໜຸນໃຈເຂົາຊະ ຢ້ານວ່າໃຈຂອງຄົນນັ້ນ ອາດ ຊິຖືກກືນກິນໄປ
ດ້ວຍຄວາມກຸ້ມໃຈຫລາຍກໍໄດ້
2:8 ຈັ່ງຊັ້ນ ຂ້ອຍຂໍວິງວອນພວກເຈົ້າ ໃຫ້ຢືນຢັນຄວາມຮັກຂອງພວກເຈົ້າຕໍ່ຄົນນັ້ນ
ໃໝ່ອີກແໜ່
2:9 ເປັນຍ້ອນສາເຫຕຸນີ້ເນາະ ທີ່ຂ້ອຍໄດ້ຂຽນມາຕັກເຕືອນພວກເຈົ້າແຕ່ທຳອິດ
ເປັນການພິສູດເບິ່ງໃຈຂອງພວກເຈົ້າ ເພື່ອຊິຮູ້ວ່າພວກເຈົ້າຊິຍອມເຊື່ອຟັງໃນຄູ່
ຢ່າງຫລືບໍ່
2:10 ຄື ບັດພວກເຈົ້າຍົກໂທດໃຫ້ອະໄພຜູ້ໃດ ຂ້ອຍກໍຍົກໂທດໃຫ້ອະໄພຜູ້ນັ້ນນຳ
ຍ້ອນວ່າຄັ່ນຂ້ອຍເຄີຍຍົກໂທດໃຫ້ອະໄພອີຫຍັງ ຂ້ອຍໄດ້ຍົກໂທດໃຫ້ອະໄພຜູ້-
ນັ້ນຕໍ່ໜ້າ ພຣະຄຣິດ ຍ້ອນເຫັນແກ່ພວກເຈົ້າ
2:11 ບໍ່ຊັ້ນ ຈັ່ງວ່າ ພະຍາມານ ຊາຕານ ອາດ ຊິມີຊ່ອງທາງເອົາປຽບພວກເຮົາໄດ້
ໂດຍວ່າເຮົາຮູ້ດີໃນລູກຫລິ້ນກົນອຸບາຍຂອງມັນຢູ່ແລ້ວ
2:12 ນອກຈາກຫັ້ນອີກ ບັດຂ້ອຍໄປຮອດເມືອງ ໂທອາດ ເພື່ອປະກາດຂ່າວປະ-
ເສີດເລື່ອງ ພຣະຄຣິດ ນັ້ນ ເພິ່ນຜູ້ເປັນພຣະຜູ້ເປັນເຈົ້າໄດ້ເປີດປະຕູເປັນຫົນທາງ
ໄວ້ໃຫ້ຂ້ອຍ
2:13 ແຕ່ຂ້ອຍບໍ່ຄ່ອຍສະບາຍໃຈ ຍ້ອນຂ້ອຍບໍ່ໄດ້ຮັບ ຕິໂຕ ນ້ອງໃນຄວາມເຊື່ອ
ຂອງຂ້ອຍຢູ່ນັ້ນ ກໍເລີຍລາພວກເຂົາເດີນທາງໄປແຄວ້ນ ມາເກໂດເນຍ ຕໍ່
2:14 ແຕ່ບັດນີ້ ຂໍຂອບໃຈພຣະເຈົ້າ ຜູ້ເພິ່ນທີ່ນຳເຮົາໄປສູ່ຄວາມມີໄຊຢູ່ຕະຫລອດ
ໃນ ພຣະຄຣິດ ຄືກິ່ນຫອມໃນການຮູ້ຈັກເລື່ອງເພິ່ນ ກໍໄດ້ລາມໄປຮອດທົ່ວຄູ່
ໜ້ອງໂດຍທາງພວກເຮົາ
2:15 ຄືສຳລັບພຣະເຈົ້ານັ້ນພວກເຮົາກໍສິ່ງກິ່ນອັນຫອມຫວານຂອງ ພຣະຄຣິດ ທັງ
ໃນພວກຄົນທີ່ພວມຊິລອດພົ້ນນັ້ນ ພ້ອມທັງໃນພວກຄົນທີ່ພວມຊິພິນາດນັ້ນນຳ
2:16 ຄືສຳລັບຜູ້ຄົນທີ່ບໍ່ເຊື່ອ ມັນເປັນກິ່ນຄວາມຕາຍ ນຳເຂົາໄປສູ່ຄວາມຕາຍ ແລ້ວ
ສຳລັບຜູ້ຄົນທີ່ເຊື່ອນັ້ນ ມັນກໍເປັນກິ່ນຫອມຂອງຊີວິດ ນຳເຂົາໄປສູ່ຊີວິດອັນຕະ-
ຫລອດໄປເປັນນິດ ໃຜແໜ່ພໍພຽງໃນຖ້ອຍຄຳແນວໝູ່ນີ້

2:17 ແລ້ວພວກເຮົາບໍ່ຄືຫລາຍຄົນທີ່ບິດເບືອນ ພຣະຄໍາ ຂອງພຣະເຈົ້າ ຫາກິນ
ດ້ວຍເລ້ຫລ່ຽມ ແຕ່ກົງກັນຂ້າມ ຄືກັນກັບຄົນທີ່ມາຈາກພຣະເຈົ້າ ພວກເຮົາປະ-
ກາດເລື່ອງ ພຣະຄຣິດ ດ້ວຍໃຈຈິງໂດຍໃນສາຍຕາຂອງພຣະເຈົ້າ

# 2 ໂກຣິນໂທ ບົດທີ 3

3:1 ພວກເຮົາຊິຕ້ອງແນະນໍາໂຕເອງໃໝ່ໃຫ້ພວກເຈົ້າຢູ່ບໍ້ ຫລືວ່າພວກເຮົາຕ້ອງ-
ການໜັງສືຮັບຮອງແນະນໍາໂຕມາຍື່ນໃຫ້ກັບພວກເຈົ້າບໍ້ ຫລືບໍ່ຊັ່ນພວກເຮົາຕ້ອງ-
ການໜັງສືຮັບຮອງຈາກພວກເຈົ້າ ນໍາໄປຍື່ນໜ້ອງອື່ນໆ ບໍ້ ຄືກັນກັບຜູ້ລາງຄົນ
ນັ້ນ
3:2 ທີ່ຈິງແລ້ວ ແມ່ນພວກເຈົ້ານັ້ນເອງທີ່ເປັນໜັງສືຮັບຮອງຂອງພວກເຮົາ ທີ່ຈາລຶກ
ໄວ້ໃນໃຈຂອງພວກເຮົາ ຊຶ່ງໝົດຄູ່ຄົນໄດ້ອ່ານໄດ້ຮູ້ກັນຢູ່ແລ້ວ
3:3 ດ້ວຍວ່າ ພວກເຈົ້າໄດ້ເປັນໜັງສືຂອງ ພຣະຄຣິດ ທີ່ຈາລຶກໄວ້ແລ້ວ ຊຶ່ງພວກ
ເຮົາໄດ້ນໍາມາຮັບເຊື່ອ ບໍ່ແມ່ນໜັງສືແບບທີ່ຈາລຶກໄວ້ໂດຍນໍ້າໝຶກ ແຕ່ໄດ້ຈາລຶກ
ໄວ້ໂດຍ ພຣະວິນຍານ ຂອງພຣະເຈົ້າຜູ້ເພິ່ນດໍາລົງຢູ່ ແລ້ວບໍ່ໄດ້ເປັນໜັງສືທີ່ສະ-
ກັດໄວ້ໃນແຜ່ນຫີນ ແຕ່ໄດ້ຈາລຶກໄວ້ໃນດວງໃຈ
3:4 ແລ້ວພວກເຮົາມີຄວາມເຊື່ອໝັ້ນຕໍ່ພຣະເຈົ້າແນວນັ້ນ ໂດຍທາງ ພຣະຄຣິດ
3:5 ດ້ວຍວ່າ ບໍ່ແມ່ນພວກເຮົາມີຄວາມພໍພຽງໃນໂຕເອງແຕ່ປະການໃດເລີຍ ທີ່ຊິຖື
ວ່າມີອິທຍັງໄດ້ເກີດມາຈາກໂຕເຮົາເອງ ແຕ່ວ່າຄວາມພໍພຽງຂອງພວກເຮົານັ້ນມາ
ຈາກພຣະເຈົ້າ
3:6 ຜູ້ເພິ່ນໄດ້ໂຜດໃຫ້ພວກເຮົາມີຄວາມສາມາດທີ່ຊິຮັບໃຊ້ເພິ່ນໄດ້ ໃນເລື່ອງຄໍາ-
ໝັ້ນສັນຍາໃໝ່ນັ້ນ ຊຶ່ງບໍ່ແມ່ນດ້ວຍລາຍລັກອັກສອນທີ່ມີຈາລຶກໄວ້ໃນກົດບັນຍັດ
ແຕ່ດ້ວຍ ພຣະວິນຍານ ຕ່າງຫາກ ຄືຂໍ້ຕ່າງໆ ໃນກົດບັນຍັດມີແຕ່ສັງຫານ ແຕ່
ພຣະວິນຍານ ໂຜດໃຫ້ມີຊີວິດ
3:7 ແຕ່ຄັນພັນທະກິດຂອງກົດຂໍ້ບັນຍັດທີ່ມີຈາລຶກໄວ້ໃນແຜ່ນຫີນນັ້ນ ທີ່ມີແຕ່ໜ້າ-
ທີ່ຊີ້ຜິດເຖິງການສັງຫານຍັງມີສັກສີຫລາຍ ຈົນພວກຄົນ ອິສະຣາເອນ ບໍ່ສາມາດ
ເບິ່ງໜ້າຂອງເຖົ້າ ໂມເຊ ໄດ້ເລີຍ ຍ້ອນແສງລັດສະໝີຢູ່ໜ້າ ລາວ ນັ້ນ ບໍ່ວ່າແສງ
ນັ້ນພວມລື້ລົງ

3:8 ຄັນບໍ່ຊັ້ນ ພັນທະກິດທາງ ພຣະວິນຍານ ຊິບໍ່ມີສັກສີແຮງຫລາຍກວ່ານັ້ນອີກບໍ້
3:9 ຄື ຄັນການຮັບໃຊ້ຕາມລະບົບເກົ່າທີ່ມີແຕ່ຕັດສິນລົງໂທດນັ້ນກໍຍັງມີສັກສີຢູ່
ການຮັບໃຊ້ ຮັບໃຊ້ຕາມລະບົບໃໝ່ນີ້ ທີ່ໃຫ້ຄວາມຊອບທຳໄດ້ ກໍຕ້ອງມີສັກສີແຮງ
ຫລາຍກວ່າລະບົບເກົ່ານັ້ນ
3:10 ຄື ແມ່ນແຕ່ລະບົບເກົ່ານັ້ນເຄີຍມີສັກສີມີລັດສະໝີຫລາຍມາກ່ອນ ບັດນີ້ມັນ
ຈາງລົງໄປແລ້ວ ຄັນປຽບກັບລະບົບໃໝ່ທີ່ມີສັກສີມີລັດສະໝີແຮງກ້າຫລາຍກວ່າ
3:11 ຍ້ອນວ່າ ຄັນແນວເກົ່າຊຶ່ງເຄີຍມີສັກສີມີລັດສະໝີທີ່ພວມໝົດໄປແລ້ວນັ້ນ
ແນວທີ່ຍັງດຳລົງຢູ່ຕະຫລອດການນີ້ ກໍມີສັກສີມີລັດສະໝີແຮງຫລາຍກວ່າອີກ
3:12 ດ້ວຍວ່າ ບັດພວກເຮົາມີຄວາມຫວັງອັນໝັ້ນຄົງຈັ່ງຊັ້ນແລ້ວ ເຮົາຈັ່ງມີໃຈກ້າ
ໃຊ້ຄຳເວົ້າທີ່ເດັ່ນຊັດໃນການປະກາດ
3:13 ບໍ່ຄືເຖົ້າ ໂມເຊ ທີ່ເອົາຜ້າຄຸມປິດບັງໜ້າ ລາວ ໄວ້ ເພື່ອບໍ່ໃຫ້ຄົນ ອິສະຣາເອນ
ສັງເກດ ເຫັນວ່າລັດສະໝີທີ່ໜ້າ ລາວ ນັ້ນ ພວມເສື່ອມລົງໄປ
3:14 ແຕ່ຈິດໃຈຂອງພວກຄົນ ອິສະຣາເອນ ນັ້ນກໍມືດມົວແຂງກະດ້າງໄປ ຈົນຮອດ
ຄູ່ມື້ນີ້ເລີຍ ຄືບັດຍາມເຂົາອ່ານຄຳພີບູຮານ ຜ້າຄຸມນັ້ນກໍຍັງປິດບັງຄວາມຈິງໄວ້ຢູ່
ຄືເກົ່າ ຊຶ່ງໄດ້ຖືກເປີດອອກແລ້ວໂດຍໃນ ພຣະຄຣິດ
3:15 ຄື ຕະຫລອດມາຈົນຮອດຄູ່ມື້ນີ້ ຍາມໃດທີ່ເຂົາເປີດອ່ານໜັງສືຂອງເຖົ້າ ໂມເຊ
ຜ້າຄຸມນັ້ນກໍຍັງປິດບັງຈິດໃຈຂອງພວກເຂົາໄວ້ຄືເກົ່າ
3:16 ຈັ່ງໃດກໍຕາມ ບັດຜູ້ໃດຜູ້ໜຶ່ງໃນພວກເຂົາຫັນມາຫາເພິ່ນ ຜ້າຄຸມນັ້ນກໍຊິຖືກ
ຍົກອອກໄປສຳລັບເຂົາ
3:17 ແຕ່ບັດນີ້ ອົງພຣະຜູ້ເປັນເຈົ້າເປັນ ພຣະວິນຍານ ນັ້ນເອງ ແລ້ວ ພຣະວິນຍານ
ຂອງເພິ່ນຢູ່ໃສ ມີເສລີພາບຢູ່ນັ້ນນຳ
3:18 ແຕ່ພວກເຮົາຄູ່ຄົນໄດ້ເຫັນສະຫງ່າລາສີຂອງເພິ່ນແລ້ວ ຄືກັນກັບແນມເບິ່ງໃນ
ແກ້ວໂດຍບໍ່ມີຜ້າຄຸມປິດບັງໃບໜ້າຂອງເຮົາໄວ້ ຄືພວກເຮົາພວມຊິຮັບການປ່ຽນ
ແປງໃຫ້ເປັນພາບລັກອັນດຽວກັນກັບເພິ່ນ ຈາກສະຫງ່າລາສີເຂົ້າສູ່ສະຫງ່າລາສີ
ໂດຍທາງ ພຣະວິນຍານ ຂອງອົງພຣະຜູ້ເປັນເຈົ້າ

# 2 ໂກຣິນໂທ ບົດທີ 4

4:1 ຈັ່ງຊັ້ນ ບັດພວກເຮົາມີພາລະໜ້າທີ່ໃນການຮັບໃຊ້ແບບນີ້ ພວກເຮົາຈັ່ງບໍ່ໄດ້
ໝົດກຳລັງໃຈເລີຍ ຍ້ອນໄດ້ຮັບຄວາມເມດຕາມາແລ້ວ
4:2 ແຕ່ວ່າ ເຮົາໄດ້ປະຖິ້ມ ກິດຈະການ ຕ່າງໆ ຄືແບບອັບອາຍທີ່ເປັນຕາປິດເຊື່ອງ
ໄວ້ນັ້ນ ຄືບໍ່ໄດ້ດຳເນີນໃນທາງເລ້ຫລ່ຽມ ກັບບໍ່ໄດ້ຊອກບິດເບືອນ ພຣະຄຳ ຂອງ
ພຣະເຈົ້າໃນທາງຄົດໂກງ ແຕ່ວ່າ ໄດ້ໃຊ້ ພຣະຄຳ ຂອງພຣະເຈົ້າໃນທາງສັດຈະ
ຢ່າງເປີດເຜີຍ ຈັ່ງໄດ້ແນະນຳໂຕເອງຕໍ່ຈິດສຳນຶກຂອງຄູ່ຄົນ ກັບຕໍ່ໜ້າພຣະເຈົ້າ
ນຳ
4:3 ແຕ່ຄັ່ນເລື່ອງຂ່າວປະເສີດຂອງເຮົານີ້ໄດ້ຖືກປິດບັງໄວ້ຈາກໃຜ ກໍແມ່ນຈາກ
ພວກຄົນໝູ່ນັ້ນທີ່ພວມຊິພິນາດໄປ
4:4 ຄືຝ່າຍຄົນທີ່ບໍ່ເຊື່ອນັ້ນ ພະຍາມານ ຊາຕານ ຜູ້ເປັນພະເປັນເຈົ້າຂອງຍຸກນີ້ ໄດ້
ເຮັດໃຫ້ຕາໃຈຂອງເຂົາມືດບອດໄປ ເພື່ອບໍ່ໃຫ້ແສງສະຫວ່າງຂອງຂ່າວປະເສີດ
ທີ່ເຕັມໄປດ້ວຍສະຫງ່າລາສີຂອງ ພຣະຄຣິດ ຜູ້ເປັນພາບລັກຂອງພຣະເຈົ້າ
ສ່ອງແສງເຂົ້າໃສ່ພວກເຂົາເລີຍ
4:5 ດ້ວຍວ່າ ພວກເຮົາບໍ່ໄດ້ປະກາດໂຕເຮົາເອງ ແຕ່ໄດ້ປະກາດເຖິງພຣະເຢຊູ-
ຄຣິດເຈົ້າ ກັບໄດ້ແນະນຳໂຕເຮົາເອງວ່າເປັນແຕ່ຜູ້ຮັບໃຊ້ຂອງພວກເຈົ້າ ຍ້ອນ
ເຫັນແກ່ ພຣະເຢຊູ ນັ້ນເອງ
4:6 ຄື ແມ່ນພຣະເຈົ້າ ຜູ້ທີ່ບັນດານໃຫ້ຄວາມສະຫວ່າງປາກົດອອກຈາກຄວາມມືດ
ນັ້ນ ໄດ້ສ່ອງແສງເຂົ້າມາໃນຈິດໃຈຂອງພວກເຮົາແລ້ວ ເພື່ອໃຫ້ຮູ້ແຈ້ງເຫັນຈິງ
ເຖິງສະຫງ່າລາສີຂອງພຣະເຈົ້າ ຊຶ່ງປາກົດໃຫ້ເຫັນໃນໜ້າຂອງ ພຣະເຢຊູຄຣິດ
4:7 ແຕ່ພວກເຮົາມີຊັບສົມບັດອັນລ້ຳຄ່ານີ້ໄວ້ຢູ່ໃນໄຫດິນ ເພື່ອໃຫ້ເຫັນວ່າລິດອຳ-
ນາດອັນເລີດນັ້ນມາຈາກພຣະເຈົ້າ ບໍ່ແມ່ນມາຈາກໂຕເຮົາເອງເລີຍ
4:8 ເຮົາຖືກການບຽດບຽນຢູ່ອ້ອມຂ້າງ ແຕ່ກໍບໍ່ເຖິງກັບບຸກໂຈມຕີໃຫ້ໝົດກຳລັງໃຈ
ເຮົາມຶນງົງເປັນຕາງຶດ ແຕ່ກໍບໍ່ເຖິງກັບໝົດຫວັງ
4:9 ເຮົາຖືກຂົ່ມເຫງ ແຕ່ກໍບໍ່ເຖິງກັບຖືກປະຖິ້ມ ເຮົາຖືກຄວ່າງລົງແລ້ວ ແຕ່ກໍຍັງບໍ່
ເຖິງກັບພິນາດໄປ

4:10 ເຮົາແບກການຕາຍຂອງ ພຣະເຢຊູເຈົ້າ ໄວ້ຢູ່ໃນໂຕເຮົາເອງຢູ່ຕະຫລອດ ເພື່ອ
ຊີວິດຂອງ ພຣະເຢຊູ ນັ້ນຊິໄດ້ປາກົດຢູ່ໃນໂຕຂອງເຮົານຳ
4:11 ຍ້ອນວ່າ ພວກເຮົາຜູ້ທີ່ຍັງມີຊີວິດຢູ່ກໍໄດ້ຖືກມອບໄວ້ໃຫ້ຕາຍຢູ່ຕະຫລອດ
ຍ້ອນເຫັນແກ່ ພຣະເຢຊູ ເອງ ເພື່ອຊີວິດຂອງ ພຣະເຢຊູ ນັ້ນຊິໄດ້ປາກົດຢູ່ໃນຕົນ-
ໂຕອະນິຈັງຂອງເຮົານີ້
4:12 ຈັ່ງຊັ້ນ ຝ່າຍພວກເຮົານີ້ ຄວາມຕາຍກໍພວມປັ່ນປ່ວນຢູ່ ແຕ່ຝ່າຍພວກເຈົ້ານັ້ນ
ມີຊີວິດຢູ່ຢ່າງສະບາຍ
4:13 ຄືເນື່ອງຈາກວ່າ ພວກເຮົາມີໃຈເຊື່ອເປັນນ້ຳໜຶ່ງໃຈດຽວກັນ ຕາມທີ່ມີຂຽນໄວ້
ວ່າ “ຂ້ອຍເຊື່ອແລ້ວ ຂ້ອຍຈັ່ງໄດ້ເວົ້າ” ພວກເຮົາໄດ້ເຊື່ອຄືກັນ ແລ້ວເຮົາຈັ່ງໄດ້
ເວົ້າ
4:14 ໂດຍຮູ້ໄວ້ແລ້ວວ່າ ພຣະເຈົ້າຜູ້ໂຜດໃຫ້ອົງ ພຣະເຢຊູເຈົ້າ ເປັນຂຶ້ນມານັ້ນ ກໍຊິ
ໂຜດໃຫ້ພວກເຮົາເປັນຂຶ້ນມາຄືກັນ ໂດຍທາງ ພຣະເຢຊູ ແລ້ວຊິມອບຖວາຍ
ພວກເຮົາພ້ອມທັງພວກເຈົ້າໃຫ້ຢືນຢູ່ຕໍ່ໜ້າເພິ່ນ
4:15 ດ້ວຍວ່າໝົດຄູ່ແນວທີ່ເປັນໄປຫັ້ນ ກໍເປັນໄປເພື່ອຜົນປະໂຫຍດຂອງພວກເຈົ້າ
ເພື່ອເລື່ອງພຣະກະລຸນາທິຄຸນຂອງພຣະເຈົ້ານັ້ນຊິໄດ້ໄປເຖິງອີກຫລາຍຄົນຂຶ້ນ
ແລ້ວໃນທີ່ສຸດຊິມີການຂອບຄຸນອີກຫລາຍຂຶ້ນນຳ ຊຶ່ງເປັນການຖວາຍກຽດຕໍ່
ພຣະເຈົ້າ
4:16 ຈັ່ງຊັ້ນ ພວກເຮົາຈັ່ງບໍ່ຍອມໝົດກຳລັງໃຈເລີຍ ເຖິງແມ່ນວ່າສະພາບພາຍ-
ນອກຂອງເຮົານັ້ນພວມຊິຝຸພັງລົງ ແຕ່ສະພາບພາຍໃນຂອງພວກເຮົາ ກໍມີພະລັງ
ຂຶ້ນມາໃໝ່ຄູ່ມື້
4:17 ດ້ວຍວ່າ ການທຸກຍາກລຳບາກນ້ອຍໆ ນ້ອຍໆ ນັ້ນ ຊຶ່ງພວກເຮົາຕ້ອງຖືກແຄ່
ບຶດດຽວ ຊິໄດ້ກາຍເປັນສັກສີອັນຍິ່ງໃຫຍ່ກວ່າ ໃຫ້ພວກເຮົາຢູ່ຕະຫລອດໄປເປັນ-
ນິດ
4:18 ຄືວ່າ ພວກເຮົາບໍ່ໄດ້ຈົດຈໍ່ມຸ້ງໝາຍໃນແນວທີ່ຕາແນມເຫັນໄດ້ ແຕ່ໄດ້ຈົດຈໍ່ມຸ້ງ
ໝາຍໃນແນວທີ່ຕາແນມບໍ່ເຫັນ ຍ້ອນວ່າແນວທີ່ຕາແນມເຫັນໄດ້ນັ້ນ ກໍເປັນຂອງ

ອະນິຈັງທີ່ບໍ່ຍັ່ງຍືນ ແຕ່ແນວທີ່ຕາແນມບໍ່ເຫັນ ກໍເປັນຂອງອຳມະຕະຕະຫລອດ-
ໄປເປັນນິດ

# 2 ໂກຣິນໂທ ບົດທີ 5

5:1 ດ້ວຍເຮົາຮູ້ຢູ່ແລ້ວວ່າ ຄັ່ນເຮືອນຕູບພັກຂອງເຮົາຕອນຢູ່ໃນໂລກນີ້ຊິພັງທະ-
ລາຍໄປ ເຮົາກໍຍັງມີໜ້ອງຢູ່ໜ້ອງເຊົາທີ່ພຣະເຈົ້າໄດ້ຈັດກຽມໄວ້ໃຫ້ແລ້ວ ເປັນ
ໜ້ອງອາໄສອັນຄົງຢູ່ເປັນນິດໃນສະຫວັນພຸ້ນທີ່ບໍ່ໄດ້ສ້າງໂດຍມືມະນຸດ
5:2 ແລ້ວວ່າ ບັດຍັງຢູ່ໃນເຮືອນເກົ່ານີ້ ເຮົາຮ້ອງໄຫ້ຢູ່ ມີໃຈປາດຖະໜາຢາກຊິສວມ
ເຮືອນທີ່ພັກອາໄສໃໝ່ຂອງເຮົານັ້ນ ທີ່ມາຈາກສະຫວັນ
5:3 ແລ້ວຄັ່ນວ່າ ບັດໄດ້ຮັບສວມເຮືອນໃໝ່ນັ້ນແລ້ວ ເຮົາກໍຊິບໍ່ໄດ້ຢູ່ໃນສະພາບວ່າ
ເປືອຍບໍ່ ຂາດທີ່ພັກອາໄສ
5:4 ຍ້ອນວ່າ ພວກເຮົາຜູ້ທີ່ອາໄສໃນຕູບພັກນີ້ ໄດ້ຮ້ອງໄຫ້ເປັນທຸກ ບໍ່ແມ່ນຍ້ອນ
ຢາກຢູ່ໃນສະພາບວ່າເປືອຍບໍ່ ຂາດທີ່ພັກອາໄສ ແຕ່ວ່າປາດຖະໜາຊິສວມສະ-
ພາບໃໝ່ນັ້ນເອງ ເພື່ອວ່າສະພາບອະນິຈັງອັນເກົ່າທີ່ຊິຕ້ອງຕາຍ ຊິໄດ້ຖືກກືນກິນ
ດ້ວຍຊີວິດອຳມະຕະນັ້ນ
5:5 ແຕ່ບັດນີ້ ພຣະເຈົ້າຜູ້ເພິ່ນໄດ້ກຽມພວກເຮົາໄວ້ເພື່ອຮັບສະພາບໃໝ່ນັ້ນ ເພິ່ນກໍ
ຍັງໂຜດໃຫ້ ພຣະວິນຍານ ມາຢູ່ນຳເຮົາໄວ້ໃຫ້ເປັນຄ່າມັດຈຳ
5:6 ຈັ່ງຊັ້ນ ພວກເຮົາໝັ້ນໃຈຢູ່ຕະຫລອດ ຍ້ອນໄດ້ຮູ້ຢູ່ແລ້ວວ່າ ແມ່ນຂະນະທີ່ເຮົາ
ຢູ່ໃນຮ່າງກາຍນີ້ ເຮົາຍັງບໍ່ທັນໄປຢູ່ນຳເພິ່ນ
5:7 (ດ້ວຍວ່າພວກເຮົາດຳເນີນຊີວິດໂດຍຄວາມເຊື່ອ ບໍ່ແມ່ນຕາມທີ່ຕາແນມເຫັນ
ໄດ້)
5:8 ແລ້ວພວກເຮົາມີຄວາມໝັ້ນໃຈ ເອີ້ກໍຍັງດີໃຈໄວ້ ຍ້ອນຢາກຊິໄປຢູ່ນຳເພິ່ນ
ຫລາຍກວ່າຢູ່ໃນຮ່າງກາຍນີ້
5:9 ຈັ່ງຊັ້ນ ພວກເຮົາຕັ້ງເປົ້າວ່າ ບໍ່ວ່າຊິຢູ່ໃນກາຍນີ້ກໍດີ ຫລືບໍ່ຢູ່ກໍດີ ເຮົາພະຍາຍາມ
ທີ່ຊິເປັນທີ່ຄວນພໍໃຈຂອງເພິ່ນ

5:10 ຍ້ອນວ່າ ເຮົາຄູ່ຄົນຊິຕ້ອງຣາຍງານໂຕຢູ່ຕໍ່ໜ້າ ພຣະຄຣິດ ທີ່ບັນລັງພິຈາລະ-
ນາຂອງເພິ່ນ ເພື່ອຄູ່ຄົນຊິໄດ້ຮັບລາງວັນ ສົມກັບການງານທີ່ໂຕໄດ້ເຮັດຕອນຢູ່ໃນ
ຮ່າງກາຍ ວ່າມັນມີຄຸນຄ່າດີຫລືບໍ່
5:11 ດ້ວຍເຮົາຮູ້ຢູ່ແລ້ວເຖິງຄວາມກ້ຽວໂກດອັນຮ້າຍແຮງຂອງອົງພຣະຜູ້ເປັນເຈົ້າ
ນັ້ນ  ພວກເຮົາຈັ່ງຊັກຊວນຄົນໃຫ້ກັບໃຈໃໝ່  ແຕ່ຝ່າຍພວກເຮົາ ພຣະເຈົ້າຮູ້ວ່າ
ເຮົາເປັນຄົນແບບໃດ ແລ້ວຂ້ອຍຫວັງວ່າ ຈິດສຳນຶກຂອງພວກເຈົ້າ ຄວນຮູ້ຈັກວ່າ
ເຮົາເປັນຄົນແບບໃດຄືກັນ
5:12 ຄື ພວກເຮົາຊິບໍ່ໄດ້ແນະນຳອ້າງໂຕເອງໃໝ່ໃຫ້ກັບພວກເຈົ້າອີກດອກ ແຕ່
ເປີດໂອກາດໃຫ້ພວກເຈົ້າອວດອ້າງໃນພວກເຮົາແທນ ວ່າເຮົາດີສໍ່າໃດ  ເພື່ອ
ພວກເຈົ້າຊິໄດ້ມີຂໍ້ໂຕ້ຕອບຄົນພວກນັ້ນທີ່ມັກຫາສັກສີອອກໜ້າອອກຕາໃຫ້ຄົນ
ເຫັນແຕ່ເປືອກນອກຊື່ໆ  ແຕ່ບໍ່ມີແນວອີຫຍັງເລີຍທີ່ຊິອ້າງໄດ້ຝ່າຍຈິດໃຈ
5:13 ຍ້ອນວ່າ ຄັນໃຈຂອງພວກເຮົາຈົນປັນຍາ ມັນກໍເປັນຍ້ອນການເຫັນແກ່ການ
ງານຂອງພຣະເຈົ້າ ຫລືຄັນໃຈຂອງພວກເຮົາມີສະຕິດີ ກໍຍ້ອນເຫັນແກ່ຜົນປະ-
ໂຫຍດຂອງພວກເຈົ້າ
5:14 ດ້ວຍວ່າ ຄວາມຮັກຂອງ ພຣະຄຣິດ ນັ້ນເປັນແຮງຈູງໃຈພວກເຮົາ  ຄືຄັນມີຄົນ
ຜູ້ໜຶ່ງຕາຍເພື່ອກອບກູ້ຄົນທັງມວນ ໝາຍຄວາມວ່າ ຄົນທັງມວນນັ້ນກໍຢູ່ໃນສະ-
ພາບຕາຍໄປແລ້ວ
5:15 ແລ້ວທີ່ວ່າເພິ່ນໄດ້ຕາຍເພື່ອຄົນທັງມວນນັ້ນ ກໍເພື່ອພວກເຂົານັ້ນທີ່ໄດ້ຮັບຊີ-
ວິດໃໝ່ ຊິບໍ່ໄດ້ຢູ່ເພື່ອຜົນປະໂຫຍດຂອງໂຕເອງອີກຕໍ່ໄປ ແຕ່ຊິຢູ່ເພື່ອເພິ່ນຜູ້ທີ່
ຕາຍແທນເຂົາ ແລ້ວໄດ້ເປັນຂຶ້ນມາອີກ
5:16 ຈັ່ງຊັ້ນ ແຕ່ນີ້ໄປພວກເຮົາຊິບໍ່ໄດ້ມອງຜູ້ໃດຕາມຄ່ານິຍົມທາງໂລກນີ້ອີກ ແມ່ນ
ວ່າແຕ່ກ່ອນນັ້ນພວກເຮົາເຄີຍຮູ້ຈັກ ພຣະຄຣິດ ໃນເນື້ອໜັງ ເບິ່ງເຫັນ ພຣະຄຣິດ
ຕາມເນື້ອໜັງຕາມຄ່ານິຍົມທາງໂລກນີ້ ແຕ່ບັດນີ້ພວກເຮົາບໍ່ຮູ້ຈັກເພິ່ນແບບນັ້ນ
ອີກຕໍ່ໄປ

5:17 ຈັ່ງຊັ້ນ ຄັ້ນຜູ້ໃດຢູ່ໃນ ພຣະຄຣິດ ຜູ້ນັ້ນເປັນຄົນທີ່ຖືກສ້າງຂຶ້ນມາໃໝ່ແລ້ວ
ແນວເກົ່າໆ ກໍລ່ວງຜ່ານໄປໝົດແລ້ວ ນີ້ແຫລະ ໝົດຄູ່ແນວໄດ້ກາຍເປັນແນວໃໝ່
ທັງນັ້ນ
5:18 ແລ້ວໝົດຄູ່ແນວນີ້ໄດ້ມາຈາກພຣະເຈົ້າຜູ້ເພິ່ນໃຫ້ເຮົາຄືນດີກັນກັບເພິ່ນ ໂດຍ
ທາງ ພຣະເຢຊູຄຣິດ ກັບໄດ້ມອບໝາຍພັນທະກິດຮັບໃຊ້ໃນເລື່ອງການຄືນດີກັນ
ນັ້ນ
5:19 ດ້ວຍວ່າ ພຣະເຈົ້າເພິ່ນໃຫ້ມະນຸດໂລກຄືນດີກັນກັບເພິ່ນເອງໂດຍທາງ ພຣະ-
ຄຣິດ ຄືເພິ່ນບໍ່ໄດ້ຖືການລົງໂທດຍ້ອນການລະເມີດຂອງເຂົາເລີຍ ກັບໄດ້ຝາກ
ຝັງຖ້ອຍຄໍາເລື່ອງການຄືນດີກັນນີ້ ໄວ້ໃຫ້ພວກເຮົານໍາ
5:20 ບັດນີ້ ພວກເຮົາເປັນທູດຂອງ ພຣະຄຣິດ ຄືວ່າ ພຣະເຈົ້າພວມຊິຂໍຮ້ອງຕໍ່ພວກ
ເຈົ້າຜ່ານທາງພວກເຮົາໃຫ້ຄືນດີກັນກັບເພິ່ນ ຈັ່ງຊັ້ນໃນຖານະວ່າເປັນຜູ້ແທນ
ຂອງ ພຣະຄຣິດ ນັ້ນ ພວກເຮົາຈັ່ງຂໍຮ້ອງໃຫ້ພວກເຈົ້າໃຫ້ຄືນດີກັນກັບພຣະເຈົ້າ
ເດີ້
5:21 ດ້ວຍວ່າ ພຣະເຈົ້າໄດ້ໃຫ້ ພຣະເຢຊູຄຣິດ ຜູ້ບໍ່ມີບາບ ໃຫ້ເປັນບາບແທນພວກ
ເຮົາ ເພື່ອພວກເຮົາຊິໄດ້ເປັນຄົນຊອບທໍາຖືກຕ້ອງຕໍ່ໜ້າພຣະເຈົ້າໂດຍໃນເພິ່ນ
ນັ້ນ

## 2 ໂກຣິນໂທ ບົດທີ 6

6:1 ຈັ່ງຊັ້ນ ພວກເຮົາໃນຖານະວ່າເປັນຄົນຮ່ວມງານນໍາກັນກັບເພິ່ນ ຈັ່ງວອນຂໍ
ພວກເຈົ້າວ່າ ຢ່າໃຫ້ເປັນທີ່ວ່າ ການທີ່ພວກເຈົ້າໄດ້ຮັບເອົາພຣະກະລຸນາທິຄຸນ
ຂອງພຣະເຈົ້ານັ້ນ ເປັນການບໍ່ປະໂຫຍດຊື່ໆ
6:2 (ຄືເພິ່ນເຄີຍເວົ້າວ່າ “ເຮົາໄດ້ຍິນເຈົ້າແລ້ວໃນເວລາອັນເໝາະສົມ ແລ້ວໃນມື້
ນັ້ນເຮົາໄດ້ຊ່ອຍກອບກູ້ພວກເຈົ້າໃຫ້ລອດພົ້ນ” ນີ້ແຫລະ ເປັນຍາມເໝາະສົມ
ແລ້ວ ເປັນມື້ແຫ່ງຄວາມລອດພົ້ນແລ້ວເດີ້)
6:3 ພວກເຮົາບໍ່ຢາກໃຫ້ຜູ້ໃດສະດຸດໃຈໃນແນວໃດແນວໜຶ່ງເລີຍ ເພື່ອບໍ່ໃຫ້ໃຜຕິ-
ຕຽນວ່າ ພັນທະກິດການຮັບໃຊ້ຂອງພວກເຮົານັ້ນເປັນເຫດ

6:4 ແຕ່ວ່າ ໃນໝົດຄູ່ແນວ ພວກເຮົາໃນຖານະວ່າເປັນຜູ້ຮັບໃຊ້ຂອງພຣະເຈົ້ານັ້ນ
ຈັ່ງວາງໂຕໂດຍຄວາມພາກພຽນອົດທົນໃນຍາມທຸກຍາກລຳບາກ ໃນຍາມທຸກ-
ຍາກລຳບາກ ກັບໃນຍາມຖືກເຫດການບຽດບຽນ
6:5 ແລ້ວໃນຍາມຖືກຄຸ້ງບຕີ ໃນຍາມທີ່ຖືກຂັງຄຸກ ໃນຍາມວຸ້ນວາຍ ໃນຍາມເໜັດເ
ໜື່ອຍຕ່າງໆ ໃນຢາມອດຫລັບອົດນອນ ທັງໃນຍາມອຶດຢາກໝາກຫິວ
6:6 ໂດຍອາໄສຄວາມບໍລິສຸດໃຈ ກັບຄວາມອ້ອມຮູ້ ກັບກາລອດທົນອົດກັ້ນ ກັບມີ
ໃຈກະລຸນາ ໂດຍອາໄສ ພຣະວິນຍານ ບໍລິສຸດ ກັບຄວາມຮັກອັນແທ້ຈິງແບບຂອງ
ພຣະເຈົ້າ
6:7 ກັບໂດຍອາໄສ ພຣະຄຳ ອັນເປັນຄວາມຈິງ ໂດຍອາໄສລິດທານຸພາບຂອງ
ພຣະເຈົ້າ ພ້ອມທັງອາໄສເຄື່ອງ ຍຸດທະພັນ ທີ່ປະກອບດ້ວຍຄວາມຊອບທຳຂອງ
ເພິ່ນຢູ່ທັງທາງຊ້າຍກັບທາງຂວາ
6:8 ທັງໃນຍາມທີ່ເຂົາໃຫ້ກຽດ ກັບໃນຍາມທີ່ເຂົາບໍ່ໃຫ້ກຽດ ກັບໃນຍາມທີ່ຖືກເຂົາ
ເວົ້າໃສ່ໃນທາງບໍ່ດີ ກັບໃນຍາມທີ່ເຂົາຍົກຍ້ອງໃນທາງດີ ກັບໃນຍາມທີ່ຖືກເຂົາ
ຫາວ່າເປັນຄົນຂີ້ໂກງລໍ້ລວງ ບໍ່ວ່າພວກເຮົາຍັງເປັນຄົນຊື່ສັດສຸດຈະຫລິດ
6:9 ໂດນວ່າເປັນຄົນທີ່ບໍ່ມີໃຜຮູ້ຈັກ ແຕ່ຍັງມີຄົນຮູ້ຈັກ ຄືພວມຊິຕາຍແລ້ວ ແຕ່ນີ້-
ແຫລະ ພວກເຮົາກໍຍັງເປັນຢູ່ ໄດ້ຖືກເຂົາຄຸ້ງບຕີ ແຕ່ຍັງບໍ່ເຖິງຂ້າ
6:10 ຄືມີຄວາມທຸກ ແຕ່ຍັງມີຄວາມຊື່ນບານຍິນດີຢູ່ສະເໝີ ຄືທຸກຍາກລຳບາກ ແຕ່
ຍັງເຮັດໃຫ້ຫລາຍຄົນຮັ່ງມີ ຄືບໍ່ມີອີຫຍັງເລີຍ ແຕ່ກໍຍັງມີໝົດຄູ່ອັນຄູ່ແນວ
6:11 ໂອ້ ພີ່ນ້ອງຊາວ ໂກຣິນໂທ ເອີຍ ພວກເຮົາເວົ້າກັບເຈົ້າຢ່າງເປີດເຜີຍ ແລ້ວ
ຈິດໃຈຂອງພວກເຮົາກໍເປີດໄວ້ຢ່າງກວ້າງຂວາງນຳ
6:12 ຝ່າຍພວກເຮົາບໍ່ມີອີຫຍັງຂັດຂ້ອງໃນໃຈນຳພວກເຈົ້າດອກ ແຕ່ພວກເຈົ້າມີ
ແນວຂັດຂ້ອງໃນໃຈນຳພວກເຮົາຕ່າງຫາກ
6:13 ຈັ່ງຊັ້ນ ເພື່ອເປັນການຕອບສະໜອງກັນແລະກັນ (ຂ້ອຍຂໍເວົ້ານຳພວກເຈົ້າ
ຄືກັນກັບເວົ້າກັບລູກໆ) ໃຫ້ພວກເຈົ້າເປີດຈິດໃຈໄວ້ຕໍ່ພວກເຮົາຢ່າງກວ້າງຂວາງ
ຄືກັນກັບພວກເຮົາເດີ້

6:14 ແລ້ວຢ່າໃຫ້ເຂົ້າທຽມແອກກັບຄົນທີ່ບໍ່ເຊື່ອເດີ້ ຄືຄວາມຊອບທຳທາງພຣະເຈົ້າ
ນັ້ນມີຫຸ້ນສ່ວນອີຫຍັງກັບຄວາມອະທຳ ກັບຄວາມສະຫວ່າງມີຄວາມສຳພັນອີ-
ຫຍັງກັບຄວາມມືດ
6:15 ແລ້ວ ພຣະຄຣິດ ມີການປອງດອງລົງລອຍກັນກັບ ພະຍາມານ ຊາຕານບໍ້ ຫລື
ຄົນທີ່ຮັບເຊື່ອຊິມີສ່ວນອີຫຍັງກັບຄົນທີ່ບໍ່ເຊື່ອບໍ້
6:16 ຫລືວ່າ ວິຫານຂອງພຣະເຈົ້າມີການຕົກລົງອີຫຍັງກັບຮູບເຄົາລົບບໍ້ ຄືພວກ
ເຈົ້ານັ້ນເອງເປັນວິຫານຂອງພຣະເຈົ້າຜູ້ເພິ່ນດຳລົງຢູ່ ຕາມທີ່ພຣະເຈົ້າໄດ້ເວົ້າ ວ່າ
"ເຮົາຊິສະຖິດຢູ່ໃນຕົນໂຕຂອງເຂົາ ກັບຊິດຳເນີນໄປມາຫວ່າງກາງໝູ່ພວກເຂົາ
ນຳ ກັບເຮົາຊິເປັນພຣະເຈົ້າຂອງເຂົາ ແລ້ວເຂົາກໍຊິເປັນຄົນຂອງເຮົາ"
6:17 ຈັ່ງຊັ້ນ "ໃຫ້ພວກເຈົ້າແຍກໂຕອອກມາຈາກພວກເຂົາເດີ້ ໃຫ້ຢູ່ຕ່າງຫາກເດີ້
ກັບຢ່າກ່ຽວຂ້ອງກັບແນວທີ່ຊິພາເຈົ້າເປັນມົນທິນເດີ້ ແລ້ວເຮົາຊິຮັບພວກເຈົ້າໄວ້
6:18 ແລ້ວເຮົາຊິເປັນພໍ່ຂອງພວກເຈົ້າ ກັບພວກເຈົ້າກໍຊິເປັນລູກຊາຍລູກສາວຂອງ
ເຮົານຳ" ອົງພຣະຜູ້ເປັນເຈົ້າຜູ້ເພິ່ນມີລິດທານຸພາບສູງສຸດໄດ້ເວົ້າຈັ່ງຊັ້ນ

## 2 ໂກຣິນໂທ ບົດທີ 7

7:1 ພີ່ນ້ອງທີ່ຮັກທັງຫລາຍ ເອີຍ ບັດມີຄຳໝັ້ນສັນຍາຂອງພຣະເຈົ້າຄືນີ້ແລ້ວ ກໍໃຫ້
ພວກເຮົາທັງຫລາຍຊຳລະຈິດໃຈໂຕເອງຈາກໝົດຄູ່ອັນຄູ່ແນວທີ່ເປັນມົນທິນນັ້ນ
ທັງຝ່າຍເນື້ອໜັງກັບຝ່າຍຈິດວິນຍານນຳ ແລ້ວໃຫ້ຊີວິດສົມບູນດ້ວຍຄວາມບໍລິ-
ສຸດ ໂດຍການເຄົາລົບພຣະເຈົ້າ
7:2 ບັດນີ້ ໃຫ້ພວກເຈົ້າເປີດໃຈໄວ້ຕໍ່ພວກເຮົາເດີ້ ພວກເຮົາບໍ່ໄດ້ເຮັດຜິດຕໍ່ຜູ້ໃດ
ເລີຍ ພວກເຮົາບໍ່ໄດ້ພາຜູ້ໃດຫລົງໃນທາງເສື່ອມຊາມເລີຍ ກັບພວກເຮົາບໍ່ໄດ້ໂກງ
ຜູ້ໃດເລີຍ
7:3 ຂ້ອຍບໍ່ໄດ້ເວົ້າຈັ່ງຊີ້ເພື່ອຊິຟ້ອງຮ້ອງຕັດສິນລົງໂທດພວກເຈົ້າດອກ ຄືຂ້ອຍ
ເຄີຍບອກໄວ້ແລ້ວ ວ່າພວກເຈົ້າກໍຢູ່ໃນໃຈຂອງພວກເຮົາຢູ່ແລ້ວ ບໍ່ວ່າຊິເປັນຊິ
ຕາຍນຳກັນກໍຢ່າ

7:4 ຄືແມ່ນແຕ່ຂ້ອຍ ອາດ ຊິເວົ້າຕໍ່ພວກເຈົ້າແຮງຈັກໜ່ອຍ ຂ້ອຍກໍຍັງຍົກຍ້ອງເຫັນ
ແກ່ພວກເຈົ້າຕໍ່ຄົນອື່ນໆ ໃຈຂ້ອຍອົບອຸ່ນ ແລ້ວຂ້ອຍມີຄວາມຊົມຊື່ນຍິນດີນໍາພວກ
ເຈົ້າແມ່ນແຕ່ແນວລໍາບາກຕ່າງໆ
7:5 ຄືບັດຍາມພວກເຮົາໄດ້ມາຮອດແຄວັ້ນ ມາເກໂດເນຍ ບໍ່ວ່າຕົນໂຕຂອງພວກ
ເຮົາຊິເມື່ອຍລ້າຫລາຍ ກໍຍັງມີແນວຫຍຸ້ງຍາກລໍາບາກທີ່ມີຢູ່ອ້ອມຂ້າງ ພາຍນອກ
ມີຄວາມຂັດແຍ້ງຕໍ່ສູ້ ພາຍໃນກໍຢ້ານຫລາຍ
7:6 ແຕ່ຈັ່ງໃດກໍດີ ພຣະເຈົ້າຜູ້ເພິ່ນເລົ້າໂລມໜຸນໃຈຄົນທີ່ທໍ້ໃຈ ເພິ່ນກໍໄດ້ເລົ້າໂລມ
ໜຸນໃຈພວກເຮົາຕອນ ຕິໂຕ ມາ
7:7 ບໍ່ວ່າແຕ່ ລາວ ມາຫາເທົ່ານັ້ນ ແຕ່ທີ່ວ່າ ລາວ ໄດ້ບອກຂ່າວທາງພວກເຈົ້ານໍາ ທີ່
ວ່າພວກເຈົ້າໄດ້ໜຸນໃຈ ລາວ ນໍາບັດໄດ້ຍິນວ່າ ພວກເຈົ້າມີຄວາມປາດຖະໜາ ມີ
ຄວາມໂສກເສົ້າເສຍໃຈ ມີໃຈຈົດຈໍ່ຄຶດຮອດຂ້ອຍຢູ່ ຂ້ອຍຈັ່ງມີແຮງມີຄວາມຊື່ນ-
ບານຫລາຍຂຶ້ນອີກ
7:8 ຄື ເຖິງແມ່ນວ່າຂ້ອຍເຮັດໃຫ້ພວກເຈົ້າສໍານຶກຜິດເສຍໃຈຍ້ອນຈົດໝາຍຂອງ
ຂ້ອຍນັ້ນ ແຕ່ຂ້ອຍກໍບໍ່ໄດ້ເສຍດາຍໃນແນວທີ່ໄດ້ຂຽນນັ້ນ ເຖິງແມ່ນວ່າຂ້ອຍ
ເສຍດາຍຢູ່ຢ່າງໜຶ່ງ ທີ່ວ່າຈົດໝາຍນັ້ນໄດ້ເຮັດໃຫ້ພວກເຈົ້າເສຍໃຈ ແມ່ນແຕ່ຢູ່
ຍາມດຽວໜຶ່ງ
7:9 ແຕ່ບັດນີ້ ຂ້ອຍກໍມີຄວາມຊົມຊື່ນຍິນດີຫລາຍ ບໍ່ແມ່ນທີ່ວ່າພວກເຈົ້າເສຍໃຈ
ດອກ ແຕ່ທີ່ວ່າຄວາມເສຍໃຈນັ້ນໄດ້ເຮັດໃຫ້ພວກເຈົ້າໄດ້ສໍານຶກຜິດກັບໃຈແລ້ວ
ໂດຍສະແດງຄວາມເສຍໃຈໃນທາງທີ່ພຣະເຈົ້າເຫັນດີນໍາ ພວກເຈົ້າຈັ່ງບໍ່ຕ້ອງ
ໂດນຄວາມເສຍຫາຍຫຍັງຈາກພວກເຮົາເລີຍ
7:10 ຄື ການສໍານຶກຜິດເສຍໃຈຢ່າງຂອງພຣະເຈົ້ານັ້ນ ກໍເຮັດໃຫ້ເກີດການກັບໃຈໃ
ໝ່ຈັ່ງນໍາໄປສູ່ຄວາມລອດພົ້ນ ຢ່າງທີ່ບໍ່ຕ້ອງເສຍດາຍ ແຕ່ວ່າການສໍານຶກຜິດ
ເສຍໃຈແບບທາງໂລກນີ້ ກໍນໍາພາໄປສູ່ຄວາມຕາຍ
7:11 ນີ້ແຫລະ ໃຫ້ພິຈາລະນາເດີ້ ພວກເຈົ້າໄດ້ສໍານຶກຜິດເສຍໃຈໃນທາງຖືກແລ້ວ
ຍ້ອນໄດ້ເກີດການເອົາໃຈໃສ່ໃນພວກເຈົ້າ ມີຄວາມຕັ້ງໃຈທີ່ຊິແກ້ໂຕໃໝ່ ມີການ

ບໍ່ພໍໃຈ ມີຄວາມຢ້ານ ມີຄວາມປາດຖະໜາຢ່າງຈິງຈັງ ມີຄວາມກະຕືລືລົ້ນ ມີການ
ຢາກແກ້ໄຂ ແລ້ວໃນໝົດຄູ່ແນວນີ້ ພວກເຈົ້າກໍໄດ້ພິສູດໂຕເອງວ່າດີແລ້ວ
7:12 ຈັ່ງຊັ້ນ ແມ່ນແຕ່ຂ້ອຍໄດ້ຂຽນມາຍັງພວກເຈົ້າຈັ່ງຊີ້ ຂ້ອຍບໍ່ໄດ້ຂຽນມາຍ້ອນ
ເຫດຜູ້ເຮັດຜິດນັ້ນ ຫລືຍ້ອນເຫດຜູ້ທີ່ບາດເຈັບນັ້ນ ແຕ່ໄດ້ຂຽນມາເພື່ອໃຫ້ພວກ
ເຈົ້າເຫັນວ່າ ພວກເຮົາມີໃຈລ້ຽງດູພວກເຈົ້າຫລາຍສໍ່າໃດໃນສາຍຕາຂອງພຣະ-
ເຈົ້າ
7:13 ຈັ່ງຊັ້ນ ບັດໄດ້ຍິນວ່າພວກເຈົ້າໄດ້ຮັບການໜຸນໃຈ ພວກເຮົາກໍດີໃຈນໍາ ແລ້ວ
ກໍແຮງດີໃຈຫລາຍຍ້ອນຂ່າວທີ່ ຕີໂຕ ນໍາມານັ້ນ ທີ່ວ່າພວກເຈົ້າໄດ້ຊ່ອຍໃຫ້ຈິດ-
ໃຈຂອງ ລາວ ຊື່ນບານນໍາ
7:14 ຄືຄັ່ນຂ້ອຍໄດ້ຍົກຍ້ອງອີຫຍັງເລື່ອງພວກເຈົ້າສູ່ ລາວ ຟັງນັ້ນ ຂ້ອຍບໍ່ຕ້ອງຄຶດ
ເສຍດາຍຫຍັງເລີຍດອກ ຍ້ອນວ່າຄູ່ແນວທີ່ພວກເຮົາໄດ້ບອກພວກເຈົ້ານັ້ນກໍ
ແມ່ນໝົດ ແລ້ວແນວທີ່ເຮົາໄດ້ຍົກຍ້ອງສູ່ ຕີໂຕ ຟັງນັ້ນກໍເປັນຈິງຄືກັນນໍາ
7:15 ແລ້ວຝ່າຍນາຍ ຕີໂຕ ນັ້ນ ໃຈຂອງລາວກໍແຮງຮັກແພງພວກເຈົ້າຫລາຍຂຶ້ນອີກ
ບັດ ລາວ ຄຶດພໍ້ທີ່ວ່າພວກເຈົ້າໄດ້ເຊື່ອຟັງ ກັບໄດ້ຕ້ອນຮັບ ລາວ ໄວ້ດ້ວຍຄວາມ
ເຄົາລົບຈົນໂຕສັ່ນ
7:16 ຈັ່ງຊັ້ນ ຂ້ອຍກໍມີຄວາມຍິນດີຫລາຍ ທີ່ວ່າຂ້ອຍເຊື່ອໝັ້ນໃນພວກເຈົ້າໄດ້ຄູ່
ຢ່າງເລີຍ

# 2 ໂກຣິນໂທ ບົດທີ 8

8:1 ບອກຈາກນັ້ນອີກ ພີ່ນ້ອງທັງຫລາຍເອີຍ ພວກເຮົາຢາກໃຫ້ພວກເຈົ້າຮູ້ເຖິງ
ພຣະກະລຸນາທິຄຸນຂອງພຣະເຈົ້ານັ້ນ ອັນທີ່ເພິ່ນໄດ້ໂຜດໃຫ້ພີ່ນ້ອງກຸ່ມຜູ້ເຊື່ອ
ຕ່າງໆ ໃນແຄວ້ນ ມາເກໂດເນຍ
8:2 ວ່າ ຂະໜາດພວກເຂົາຖືກທົດລອງຢ່າງໜັກໜາ ແລ້ວມີຄວາມທຸກຍາກຫລາຍ
ກໍຕາມ ເຂົາກໍຍັງມີຄວາມຍິນດີທີ່ຊີຖວາຍຊັບຢ່າງເຫລືອລົ້ນ
8:3 ຂ້ອຍໄດ້ເປັນພະຍານຢືນຢັນວ່າ ພວກເຂົາມີຄວາມຍິນດີຖວາຍຢ່າງສຸດຄວາມ
ສາມາດຂອງເຂົາ ແລ້ວກໍຍັງເກີນຄວາມສາມາດຂອງເຂົາຊະອີກ

8:4 ແລ້ວພວກເຂົາກໍຍັງຂໍຮ້ອງຫລາຍຕໍ່ພວກເຮົາ ວ່າຢາກໃຫ້ເຮົາຮັບແນວຖວາຍ
ຂອງເຂົານັ້ນ ຍ້ອນເຂົາຢາກມີສ່ວນຮ່ວມໃນການຮັບໃຊ້ນໍາ ເພື່ອຊ່ອຍເຫລືອພີ່-
ນ້ອງຄົນຂອງພຣະເຈົ້າ
8:5 ແລ້ວກວ່ານັ້ນອີກ ເຂົາໄດ້ເຮັດຫລາຍກວ່າທີ່ເຮົາຄາດຄິດ ຄືພວກເຂົາໄດ້ມອບ
ຖວາຍໂຕເອງໄວ້ຕໍ່ອົງພຣະຜູ້ເປັນເຈົ້າຊະກ່ອນ ກັບຕໍ່ພວກເຮົານໍາ ຕາມພຣະປະ-
ສົງຂອງພຣະເຈົ້າ
8:6 ແລ້ວພວກເຮົາຈັ່ງບອກ ຕີໂຕ ໃຫ້ ລາວ ເກັບແນວຖວາຍຕໍ່ອີກໃຫ້ມັນແລ້ວ
ຕາມທີ່ ລາວ ໄດ້ເລີ່ມມານັ້ນ ຊຶ່ງເປັນຄວາມກະລຸນາທີ່ພວກເຈົ້າໄດ້ຮ່ວມຖວາຍນໍາ
8:7 ຈັ່ງຊັ້ນ ຕາມທີ່ພວກເຈົ້າບໍລິບູນໃນຄູ່ແນວ ຄືໃນຄວາມເຊື່ອ ໃນຄວາມເວົ້າ
ຄວາມຮູ້ ກັບການເອົາໃຈໃສ່ໃນການຮັກແພງທີ່ມີຕໍ່ພວກເຮົາ ຈັ່ງຂໍໃຫ້ມີການ-
ຖວາຍຢ່າງເຕັມບໍລິບູນດ້ວຍຄວາມກະລຸນາຢ່າງດຽວກັນ
8:8 ທີ່ຂ້ອຍເວົ້ານີ້ ມັນບໍ່ແມ່ນຄໍາສັ່ງດອກ ແຕ່ຂ້ອຍຄຶດຢາກທົດສອບຄວາມຮັກ-
ແພງກັບຄວາມຈິງໃຈຂອງພວກເຈົ້າຕໍ່ພີ່ນ້ອງຜູ້ອື່ນໆ
8:9 ຄືພວກເຈົ້າຮູ້ຈັກດີແລ້ວ ເຖິງພຣະກະລຸນາທີ່ຄຸນຂອງພຣະເຢຊູຄຣິດເຈົ້າຂອງ
ພວກເຮົາ ວ່າແມ່ນແຕ່ເພິ່ນມັ່ງຄັ່ງຫລາຍ ເພິ່ນກໍຍັງຍອມມາເປັນຄົນຍາກຈົນຍ້ອນ
ເຫັນແກ່ພວກເຮົາ ເພື່ອພວກເຈົ້າຊິໄດ້ເປັນຄົນຮັ່ງມີໂດຍຄວາມຍາກຈົນຂອງເພິ່ນ
8:10 ແລ້ວໃນນີ້ ຂ້ອຍຂໍແນະນໍາການດີໃຫ້ພວກເຈົ້າວ່າ ຊຶ່ງພວກເຈົ້າໄດ້ຕັ້ງຕົ້ນວ່າ
ຊິຖວາຍຊ່ອຍເຫລືອແຕ່ປີກາຍນີ້ແລ້ວ
8:11 ບັດນີ້ ສົມຄວນແລ້ວທີ່ພວກເຈົ້າຊິເຮັດການຖວາຍນັ້ນໃຫ້ມັນແລ້ວຊະ ບໍ່ວ່າ
ແຕ່ການວາງແຜນການໄວ້ນັ້ນ ແຕ່ຄວນຊິເຮັດໃຫ້ມັນແລ້ວນໍາ ຕາມກໍາລັງທີ່ພວກ
ເຈົ້າມີຢູ່
8:12 ຍ້ອນວ່າ ຄັນມີນໍ້າໃຈອັນພຽບພ້ອມຢູ່ແລ້ວ ມັນກໍເປັນການທີ່ຍອມຮັບອັນດີ ທີ່
ຊິຖວາຍຕາມທີ່ມີຢູ່ ບໍ່ແມ່ນຖວາຍຕາມທີ່ບໍ່ມີ
8:13 ນີ້ກໍບໍ່ແມ່ນໃຫ້ພວກເຈົ້າຮູ້ສຶກຖືກບີບຄັ້ນ ເພື່ອປ່ອຍຜູ້ອື່ນເບົາພະລະລົງ

8:14 ແຕ່ມັນເປັນການແບ່ງກັນຢ່າງສະເໝີພາບ ຄືໃນຍາມທີ່ພວກເຈົ້າມີເຫລືອ ກໍ
ຄວນຊີຖວາຍຊ່ອຍເຂົາຜູ້ທີ່ທຸກຍາກລຳບາກ ກັບບັດຍາມພວກເຈົ້າທຸກຍາກລຳ-
ບາກ ພວກເຂົາກໍຊີຖວາຍຊ່ອຍພວກເຈົ້າຄືກັນ
8:15 ຕາມທີ່ມີຂຽນໄວ້ວ່າ “ຄົນທີ່ເກັບຫລາຍກໍບໍ່ມີເຫລືອ ກັບຄົນທີ່ເກັບນ້ອຍກໍບໍ່ໄດ້
ຂາດເລີຍ”
8:16 ແຕ່ຂອບໃຈພຣະເຈົ້າ ຜູ້ເພິ່ນໄດ້ໂຜດໃຫ້ ຕິໂຕ ມີໃຈກະຕືລືລົ້ນເພື່ອລ້ຽງດູ
ພວກເຈົ້າ
8:17 ຍ້ອນວ່າ ບໍ່ແມ່ນແຕ່ ລາວ ຮັບເຮັດຕາມຄຳຂໍຮ້ອງຂອງຂ້ອຍຢ່າງດຽວ ແຕ່
ລາວກໍຍັງມີໃຈກະຕືລືລົ້ນທີ່ຊີໄປຫາພວກເຈົ້າຢູ່ແລ້ວ
8:18 ແລ້ວພວກເຮົາໄດ້ໃຊ້ພີ່ນ້ອງອີກຄົນໜຶ່ງໄປນຳ ຕິໂຕ ແລ້ວຜູ້ນັ້ນມີຊື່ສຽງດີໃນ
ເລື່ອງຂ່າວປະເສີດຕາມກຸ່ມຜູ້ເຊື່ອທົ່ວໄປ
8:19 ແລ້ວບໍ່ແມ່ນແຕ່ນັ້ນແນວດຽວ ຄືພີ່ນ້ອງກຸ່ມຜູ້ເຊື່ອໄດ້ເລືອກຜູ້ນັ້ນໄວ້ເປັນ
ເພື່ອນຮ່ວມງານ ເດີນທາງຊ່ອຍພວກເຮົານຳເອົາຂອງຖວາຍນີ້ໄປ ຊຶ່ງເປັນການ-
ຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າ ກັບສະແດງເຖິງນ້ຳໃຈອັນດີພ້ອມຂອງພວກ
ເຈົ້ານຳ
8:20 ຊຶ່ງການໃຫ້ຜູ້ນັ້ນມານຳ ຊີໄດ້ຊ່ອຍຫລີກລ້ຽງ ບໍ່ໃຫ້ໃຜຕິຕຽນໃນການທີ່ພວກ
ເຮົາຊີນຳເອົາຂອງຖວາຍຈຳນວນຫລາຍນັ້ນໄປແຈກຈ່າຍ
8:21 ຊຶ່ງເປັນການມຸ້ງໄວ້ໃຫ້ຄູ່ແນວນັ້ນ ເປັນທີ່ຊື່ສັດສຸດຈະຫລິດ ບໍ່ວ່າແຕ່ໃນສາຍ-
ຕາຂອງພຣະຜູ້ເປັນເຈົ້າ ແຕ່ໃນສາຍຕາຂອງເພື່ອນມະນຸດນຳ
8:22 ນອກຈາກນີ້ ພວກເຮົາກໍຍັງສົ່ງພີ່ນ້ອງອີກຜູ້ໜຶ່ງໄປນຳ ຜູ້ຊຶ່ງໄດ້ຮັບການພິສູດ
ວ່າເຂົາມີໃຈຈິດຈໍ່ຢ່າງກະຕືລືລົ້ນໃນຫລາຍອັນຫລາຍແນວ ແລ້ວບັດນີ້ເຂົາແຮງມີ
ໃຈກະຕືລືລົ້ນ ຍ້ອນຄວາມໝັ້ນໃຈທີ່ມີໃນພວກເຈົ້າ
8:23 ສ່ວນ ຕິໂຕ ນັ້ນ ລາວກໍເປັນເພື່ອນຮ່ວມງານຂອງຂ້ອຍເພື່ອພວກເຈົ້າ ແລ້ວ
ຝ່າຍພີ່ນ້ອງຜູ້ອື່ນໆ ນັ້ນ ເຂົາກໍເປັນທູດຮັບໃຊ້ຂອງກຸ່ມຜູ້ເຊື່ອທັງຫລາຍ ຈັ່ງເປັນ
ທີ່ຖວາຍກຽດແດ່ ພຣະຄຣິດ ພ້ອມນຳ

8:24 ຈັ່ງຊັ້ນ ໃຫ້ສະແດງຄວາມຮັກທີ່ພວກເຈົ້າມີໃຫ້ເຂົາເຫັນ ກັບໃຫ້ກຸ່ມຜູ້ເຊື່ອທັງ-
ຫລາຍເຫັນນຳ ເພື່ອພິສູດວ່າ ແນວທີ່ຂ້ອຍຍົກຍ້ອງພວກເຈົ້ານັ້ນເປັນເລື່ອງຈິງ

## 2 ໂກຣິນໂທ ບົດທີ 9

9:1 ແລ້ວມັນບໍ່ຈຳເປັນທີ່ຂ້ອຍຊິຕ້ອງມາຂຽນເພີ່ມເຕີມໃຫ້ພວກເຈົ້າໃນເລື່ອງການ-
ຖວາຍຊ່ອຍພີ່ນ້ອງຄົນຂອງພຣະເຈົ້ານັ້ນດອກ
9:2 ຄືຂ້ອຍຮູ້ຈັກຈິດໃຈຂອງພວກເຈົ້າວ່າພ້ອມຢູ່ແລ້ວທີ່ຊິຊ່ອຍ ຂ້ອຍຈັ່ງຍົກຍ້ອງ
ພວກເຈົ້າໃຫ້ພວກ ມາເກໂດເນຍ ຟັງວ່າ ພີ່ນ້ອງຢູ່ ອະຂາຢາ ໄດ້ຈັດກຽມໄວ້ພ້ອມ
ແລ້ວຕັ້ງແຕ່ປີກາຍນີ້ ແລ້ວບັດນີ້ຄວາມກະຕືລືລົ້ນຂອງພວກເຈົ້າກໍໄດ້ກະຕຸ້ນໃຈ
ຄົນສ່ວນຫລາຍ
9:3 ແຕ່ຈັ່ງໃດກໍຕາມ ຂ້ອຍໄດ້ໃຫ້ພີ່ນ້ອງໝູ່ນັ້ນມາຫາໄວ້ກ່ອນ ເພື່ອຊ່ອຍພວກເຈົ້າ
ໃນການຈັດກຽມໃນເລື່ອງຖວາຍໄວ້ໃຫ້ພ້ອມ ແລ້ວກໍເພື່ອການທີ່ພວກເຮົາໄດ້ຍົກ-
ຍ້ອງພວກເຈົ້ານັ້ນຊິບໍ່ໄດ້ສູນເປົ່າ
9:4 ບໍ່ຊັ້ນ ຄັ່ນຊາວ ມາເກໂດເນຍ ລາງຄົນມາກັບຂ້ອຍ ແລ້ວເຫັນວ່າພວກເຈົ້າຍັງບໍ່
ທັນກຽມພ້ອມ ພວກເຮົາກໍຊິອັບອາຍຂາຍໜ້າເລີຍໃນການຍົກຍ້ອງພວກເຈົ້ານັ້ນ
(ບໍ່ຕ້ອງເວົ້າຮອດພວກເຈົ້າດອກ)
9:5 ຈັ່ງຊັ້ນ ຂ້ອຍຈັ່ງເຫັນສົມຄວນທີ່ຊິຊັກຊວນພີ່ນ້ອງໝູ່ນັ້ນ ໃຫ້ໄປຫາພວກເຈົ້າ
ກ່ອນ ເພື່ອຊ່ອຍກຽມຂອງຖວາຍນັ້ນໄວ້ໃຫ້ພ້ອມ ຕາມທີ່ພວກເຈົ້າໄດ້ຮັບປາກໄວ້
ກ່ອນແລ້ວນັ້ນ ເພື່ອຊິເຫັນກັນວ່າ ພວກເຈົ້າຖວາຍດ້ວຍໃຈກວ້າງບໍ່ແມ່ນດ້ວຍໃຈ
ແຄບ
9:6 ແຕ່ຂ້ອຍວ່າຈັ່ງຊີ້ ຝ່າຍຜູ້ທີ່ຫວ່ານພຽງແຄ່ນ້ອຍໆ ກໍຊິເກັບກ່ຽວພຽງນ້ອຍໆ
ແລ້ວຝ່າຍຜູ້ທີ່ຫວ່ານຫລາຍ ກໍຊິເກັບກ່ຽວໄດ້ຫລາຍ
9:7 ຈັ່ງຊັ້ນ ໃຫ້ຖວາຍແຕ່ລະຄົນຕາມທີ່ມຸ້ງໝາຍໄວ້ໃນໃຈ ບໍ່ແມ່ນຄຶດເສຍດາຍ
ຫລືຝືນໃຈຖວາຍໂດຍຄວາມຈຳເປັນ ຍ້ອນວ່າພຣະເຈົ້າຮັກຜູ້ທີ່ຖວາຍດ້ວຍ
ຄວາມຍິນດີ

9:8 ດ້ວຍວ່າ ພຣະເຈົ້າສາມາດໂຜດໃຫ້ພຣະກະລຸນາທິຄຸນຂອງເພິ່ນມີຢູ່ຕໍ່ພວກ
ເຈົ້າຢ່າງອຸດົມສົມບູນ ເພື່ອວ່າພວກເຈົ້າຊິມີຄູ່ແນວຢ່າງຄົບຖ້ວນຢູ່ສະເໝີ ເພື່ອຊິ
ປະກອບການດີໃນຄູ່ແນວຢ່າງເຫລືອລົ້ນ
9:9 ຕາມທີ່ມີຄໍາຂຽນໄວ້ວ່າ "ເຂົາໄດ້ຖວາຍແຈກຈ່າຍອອກໄປ ເຂົາໄດ້ຊ່ອຍເຫລືອ
ຄົນຍາກຈົນ ຄວາມຊອບທໍາຕໍ່ພຣະເຈົ້າຂອງເຂົານັ້ນ ກໍຄົງຢູ່ເປັນນິດ"
9:10 ບັດນີ້ພຣະເຈົ້າຜູ້ເພິ່ນໂຜດໃຫ້ພືດຕໍ່ຜູ້ທີ່ຫວ່ານ ກັບໂຜດໃຫ້ຄົນມີແນວຢູ່ແນວ
ກິນ ຈັ່ງຊັ້ນ ເພິ່ນກໍຊິໂຜດໃຫ້ພືດທີ່ພວກເຈົ້າຫວ່ານເກີດຜົນທະວີຫລາຍຂຶ້ນ ກັບຊິ
ໂຜດໃຫ້ຜົນຮັບຈາກການດີທີ່ພວກເຈົ້າເຮັດນັ້ນເກີດຜົນທະວີຫລາຍຂຶ້ນນໍາ
9:11 ເພື່ອພວກເຈົ້າຊິໄດ້ຮັບການບໍາລຸງໃຫ້ຈະເລີນຂຶ້ນໃນໝົດຄູ່ແນວຢູ່ສະເໝີ
ເພື່ອປະກອບການດີຢ່າງເຫລືອລົ້ນໃນຄູ່ຢ່າງ ຊຶ່ງຜ່ານທາງພວກເຮົາ ຈັ່ງເປັນເຫດ
ທີ່ພີ່ນ້ອງຢູ່ຫັ້ນ ເກີດການຂອບໃຈພຣະເຈົ້າ
9:12 ດ້ວຍວ່າ ການດໍາເນີນງານຮັບໃຊ້ໃນເລື່ອງນີ້ ກໍບໍ່ໄດ້ຊ່ອຍພີ່ນ້ອງຄົນຂອງ
ພຣະເຈົ້າຜູ້ທຸກຍາກລໍາບາກແຕ່ແນວດຽວ ແຕ່ຍັງເປັນເຫດໃຫ້ເກີດມີການຂອບ-
ໃຈພຣະເຈົ້າຢ່າງເຕັມລົ້ນນໍາ
9:13 ດ້ວຍວ່າ ການພິສູດໃນງານຮັບໃຊ້ນີ້ ຄືພວກເຂົາທີ່ເປັນຝ່າຍຮັບກໍຍົກຍ້ອງໃຫ້
ກຽດພຣະເຈົ້າ ຍ້ອນການເຊື່ອຟັງຂອງພວກເຈົ້າໃນຂ່າວປະເສີດຂອງ ພຣະຄຣິດ
ຕາມທີ່ໄດ້ຮັບປາກໄວ້ວ່າຊິໄດ້ເຮັດ ກັບຍ້ອນໃຈເອື້ອເຟື້ອເຜື່ອແຜ່ຂອງພວກເຈົ້າ
ໃນການຖວາຍຊ່ອຍພວກເຂົາກັບຄົນອື່ນນໍາ
9:14 ແລ້ວເຂົາໄດ້ອະທິຖານເວົ້ານໍາພຣະເຈົ້າຂໍໃຫ້ເພິ່ນອວຍພອນໃຫ້ພວກເຈົ້ານໍາ
ພ້ອມທັງຄຶດຮອດພວກເຈົ້າຫລາຍ ຍ້ອນພຣະກະລຸນາທິຄຸນຂອງພຣະເຈົ້າອັນ
ເຫລືອລົ້ນນັ້ນ ທີ່ສະຖິດຢູ່ໃນພວກເຈົ້າ
9:15 ຂໍຂອບໃຈພຣະເຈົ້າສໍາລັບຂອງຂວັນອັນດີເລີດທີ່ເພິ່ນໄດ້ໂຜດໃຫ້ນັ້ນ ຊຶ່ງດີ-
ເລີດເກີນກວ່າທີ່ຊິບັນລະຍາຍໄດ້

# 2 ໂກຣິນໂທ ບົດທີ 10

10:1 ບັດນີ້ ຂ້ອຍ ໂປໂລ ນີ້ວອນຂໍພວກເຈົ້າໂດຍເຫັນແກ່ການຖ່ອມສຸພາບອ່ອນ-
ໂຍນຂອງ ພຣະຄຣິດ ຊຶ່ງສ່ວນຂ້ອຍເອງກໍຖ່ອມສຸພາບຕອນຢູ່ນຳພວກເຈົ້າ ແຕ່ມີ
ໃຈກ້າຕອນບໍ່ໄດ້ຢູ່ນຳ
10:2 ເອີ້ ຂ້ອຍຂໍຮ້ອງຕໍ່ພວກເຈົ້າແໜ່ ຄືຄັນບໍ່ຈຳເປັນຂ້ອຍບໍ່ຢາກສະແດງຄວາມ
ກ້າຫານອອກມາ ບັດຢູ່ນຳພວກເຈົ້າ ຄືເປັນຄວາມກ້າຫານຢ່າງແນ້ວແນ່ທີ່ຂ້ອຍ
ອາດ ຊິຕ້ອງສະແດງຕໍ່ຜູ້ລາງຄົນທີ່ຄາດຄຶດຜິດວ່າ ພວກເຮົາຍັງໃຊ້ຊີວິດຕາມ
ເນື້ອໜັງ
10:3 ຄື ແມ່ນວ່າພວກເຮົາ ອາດ ຍັງຢູ່ໃນເນື້ອໜັງໃນໂລກນີ້ກໍແມ່ນ ແຕ່ພວກເຮົາບໍ່
ໄດ້ຕໍ່ສູ້ຕາມເນື້ອໜັງ
10:4 (ຍ້ອນວ່າ ເຄື່ອງອາວຸດສົງຄາມຂອງພວກເຮົານັ້ນ ບໍ່ແມ່ນອາວຸດຝ່າຍເນື້ອໜັງ
ທາງໂລກນີ້ ແຕ່ເປັນອາວຸດທີ່ເຕັມໄປດ້ວຍລິດທານຸພາບຂອງພຣະເຈົ້າ ສາມາດ
ທຳລາຍກອງກຳລັງຂອງສັດຕູໃຫ້ພັງທະລາຍລົງ)
10:5 ຄືມີໄຊຕໍ່ຂໍ້ນຶກຄຶດທີ່ບໍ່ມີສາລະ ກັບຕໍ່ແນວໃຝ່ສູງຄູ່ຢ່າງທີ່ຍົກໂຕຂຶ້ນ ໂຕ້ຖຽງ
ຂັດຂວາງຄວາມຮູ້ເຖິງເລື່ອງພຣະເຈົ້າ ກັບຈັບກຸມຄວາມນຶກຄຶດຄູ່ຢ່າງໃຫ້ຢູ່ໃຕ້
ການເຊື່ອຟັງຂອງ ພຣະຄຣິດ
10:6 ແລ້ວພ້ອມທີ່ຊິລົງໂທດເຫດການລ່ວງລະເມີດຄູ່ຢ່າງ ບັດການເຊື່ອຟັງຂອງ
ພວກເຈົ້າສົມບູນແລ້ວ
10:7 ພວກເຈົ້າມັກຊິອອກການຕັດສິນຕາມທີ່ຕາເຫັນທາງຜິວນອກບໍ້ ຄັນຜູ້ໃດ
ໝັ້ນໃຈວ່າໂຕເອງເປັນຄົນຂອງ ພຣະຄຣິດ ກໍໃຫ້ເຂົາເຂົ້າໃຈວ່າ ເຮົາເປັນຄົນ
ຂອງ ພຣະຄຣິດ ຄືກັນກັບເຂົາ
10:8 ຄືແມ່ນວ່າໂຕຂ້ອຍ ອາດ ຊິອ້າງອີງຫລາຍເຖິງສິດອຳນາດນັ້ນ ທີ່ອົງພຣະຜູ້-
ເປັນເຈົ້າໄດ້ມອບໄວ້ໃຫ້ພວກເຮົາ ຂ້ອຍກໍບໍ່ເສຍດາຍ ນີ້ກໍເພື່ອເສີມສ້າງພວກ
ເຈົ້າໃຫ້ຈະເລີນຂຶ້ນ ບໍ່ແມ່ນເພື່ອທຳລາຍພວກເຈົ້າດອກ
10:9 ຄືຂ້ອຍບໍ່ຢາກໃຫ້ມັນເບິ່ງຄືຂ້ອຍພວມຂົ່ມຂູ່ພວກເຈົ້າໃຫ້ເສຍຂວັນທາງຈິດໝ
າຍດອກ

10:10 ຄືມີຜູ້ລາງຄົນເວົ້າວ່າ "ຈົດໝາຍຂອງ ລາວ ຄືກັນກັບມີນໍ້າໜັກກັບມີອຳນາດ
ຫລາຍ ແຕ່ທ່າທາງຂອງຜູ້ຄືອ່ອນກຳລັງ ກັບການເວົ້າຂອງລາວກໍເປັນຕາໜ່າຍ"
10:11 ຂ້ອຍວ່າ ໃຫ້ຜູ້ທີ່ຄິດຈັ່ງຊັ້ນເຂົ້າໃຈໄວ້ວ່າ ລັກສະນະຈົດໝາຍຂອງເຮົາເປັນ
ແບບໃດຕອນບໍ່ຢູ່ນຳ ການເຮັດຂອງພວກເຮົາກໍຊິເປັນແບບນັ້ນ ຕອນມາຮອດ
ແລ້ວ
10:12 ຄືພວກເຮົາເຫັນບໍ່ສົມຄວນທີ່ຊິເຂົ້າຫຸ້ນສ່ວນກັບເຂົາ ຫລືທຽບຊັ້ນວັນນະກັນ-
ກັບຜູ້ລາງຄົນນັ້ນທີ່ຍົກຍ້ອງໂຕເອງ ຄືບັດເຂົາຖືກັນວ່າໂຕເອງເປັນມາດຕະຖານ
ໂດຍການປຽບທຽບກັນແລະກັນ ກໍສະແດງວ່າພວກເຂົາບໍ່ມີປັນຍາ
10:13 ແຕ່ຝ່າຍພວກເຮົາ ເຮົາຊິບໍ່ຍົກຍ້ອງເຖິງການງານຂອງໂຕເກີນຂອບເຂດທີ່
ຄວນ ແຕ່ຢູ່ໃນຂອບເຂດຕາມຂະໜາດທີ່ພຣະເຈົ້າເຫັນວ່າສົມຄວນທີ່ຊິໂຜດໃຫ້
ພວກເຮົາ ແລ້ວພວກເຈົ້າກໍຢູ່ໃນຂອບເຂດນັ້ນ
10:14 ຄືພວກເຮົາບໍ່ໄດ້ລ່ວງຂອບເຂດຂອງໂຕເອງເລີຍ (ຄືວ່າເຮົາບໍ່ມີສິດມາຫາ
ພວກເຈົ້າ) ຄືແມ່ນພວກເຈົ້າເນາະ ທີ່ພວກເຮົາໄດ້ມຸ້ງໝາຍໄວ້ ທີ່ຊິນຳເອົາຂ່າວ
ປະເສີດຂອງ ພຣະຄຣິດ ມາຫາແຕ່ທຳອິດ
10:15 ພວກເຮົາບໍ່ເຄີຍອວດໃນຜົນງານນອກເຂດງານຂອງໂຕເອງດອກ ຄືບໍ່ໄດ້
ອວດໃນຜົນງານຂອງຜູ້ອື່ນໆ ແຕ່ເຮົາຫວັງວ່າ ບັດຄວາມເຊື່ອຂອງພວກເຈົ້າຈະ-
ເລີນຂຶ້ນແລ້ວ ຊິເປັນສາເຫດໃຫ້ພວກເຮົາຂະຫຍາຍເຂດອອກໄປອີກໄດ້ ຍ້ອນ
ພວກເຈົ້າ
10:16 ກໍເພື່ອຊິໄດ້ປະກາດຂ່າວປະເສີດອອກໄປໃນເຂດຕ່າງໆ ຢູ່ທາງນອກ ບໍ່ແມ່ນ
ກ້າວກ່າຍອວດໃນເຂດຜົນງານທີ່ຄົນອື່ນໄດ້ເຮັດນັ້ນ
10:17 ແຕ່ຝ່າຍຜູ້ທີ່ໂອ້ອວດນັ້ນ ກໍໃຫ້ເຂົາໂອ້ອວດໃນອົງພຣະຜູ້ເປັນເຈົ້າເດີ້
10:18 ຍ້ອນວ່າ ບໍ່ແມ່ນຄົນທີ່ແນະນຳຮັບຮອງໂຕເອງ ທີ່ສົມຄວນຊິນັບຖື ແຕ່ຄົນທີ່
ອົງພຣະຜູ້ເປັນເຈົ້າຮັບຮອງ ເປັນຜູ້ທີ່ຄວນນັບຖືອີຫລີ

## 2 ໂກຣິນໂທ ບົດທີ 11

11:1 ໂອ້ ຂ້ອຍຂໍໃຫ້ພວກເຈົ້າທົນເອົາຕໍ່ຄວາມບ້າໆບໍໆ ຂອງຂ້ອຍຈັກໜ່ອຍ ກັບຂໍ
ໄດ້ໂປດທົນເອົາແໜ່ຕໍ່ໂຕຂ້ອຍນຳ

11:2 คື ຂ້ອຍຫວງແຫນພວກເຈົ້າຫລາຍ ເປັນການຫວງແຫນຢ່າງຂອງພຣະເຈົ້າ
ຍ້ອນວ່າແມ່ນຂ້ອຍເອງເປັນຜູ້ທີ່ໄດ້ໝັ້ນພວກເຈົ້າໄວ້ແລ້ວ ເພື່ອຂ້ອຍຊິໄດ້ມອບ
ພວກເຈົ້າໃຫ້ເປັນເຈົ້າສາວຂອງເຈົ້າບ່າວແຕ່ຜູ້ດຽວ ຄືກັນກັບມອບຖວາຍສາວບໍ-
ລິສຸດຕໍ່ ພຣະຄຣິດ
11:3 ແຕ່ບັດນີ້ ຂ້ອຍຢ້ານວ່າພວກເຈົ້າ ອາດ ຊິຫລົງໄປຈາກຄວາມເຊື່ອ ອັນບໍລິສຸດ
ທີ່ພຽງງ່າຍ ຊຶ່ງມີຢູ່ໃນ ພຣະຄຣິດ ຍ້ອນຖືກຫລອກລວງດ້ວຍກົນອຸບາຍຕ່າງໆ
ຄືກັນກັບທີ່ງູບູຮານນັ້ນໄດ້ຫລອກລວງແມ່ເດີມ ເອວາ ໃຫ້ຫລົງເຊື່ອຄຳເລ້ຫລ່ຽມ
ຂອງມັນ
11:4 ຄື ຄັນຄົນຊຸມນັ້ນທີ່ມາຫາເຈົ້າໄດ້ມາປະກາດ ພຣະເຢຊູ ອົງອື່ນໆ ຊຶ່ງແຕກຕ່າງ
ຈາກອົງ ພຣະເຢຊູ ທີ່ເຮົາໄດ້ມາປະກາດໃຫ້ພວກເຈົ້າແຕ່ທຳອິດນັ້ນ ຫລືຄັ່ນພວກ
ເຈົ້າຊິຫາຮັບເອົາວິນຍານອື່ນໆ ຊຶ່ງແຕກຕ່າງຈາກທີ່ພວກເຈົ້າໄດ້ຮັບເອົາມາແຕ່
ທຳອິດແລ້ວນັ້ນ ຫລືຊິຮັບເອົາຂ່າວປະເສີດອື່ນໆ ຊຶ່ງແຕກຕ່າງຈາກທີ່ພວກເຈົ້າ
ໄດ້ຮັບເອົາໄວ້ແຕ່ທຳອິດນັ້ນ ພວກເຈົ້າຄືທົນເອົາຕໍ່ແນວແປກໆ ໃໝ່ໆ ດີແທ້
11:5 ຄືພິຈາລະນາແລ້ວ ຂ້ອຍວ່າໂຕຂ້ອຍບໍ່ໄດ້ຕ່ຳຕ້ອຍກວ່າທູດພິເສດຜູ້ມີຊື່ສຽງ
ອັນດີເດັ່ນໝູ່ນັ້ນ ແມ່ນແຕ່ໜ່ອຍດຽວ
11:6 ແມ່ນວ່າ ຂ້ອຍ ອາດ ຊິເວົ້າບໍ່ເກັ່ງກໍຕາມ ແຕ່ຂ້ອຍກໍຍັງມີຄວາມຮູ້ຫລາຍພໍສົມ-
ຄວນ ທີ່ຈິງແລ້ວພວກເຮົາກໍໄດ້ເປີດເຜີຍຄູ່ຢ່າງຊັດເຈນໃຫ້ພວກເຈົ້າຮູ້ເຫັນແລ້ວ
11:7 ແມ່ນຂ້ອຍໄດ້ເຮັດອີຫຍັງຜິດຕໍ່ພວກເຈົ້າຢູ່ບໍ້ ໃນການທີ່ຂ້ອຍຖ່ອມໃຈລົງແລ້ວ
ຈັ່ງຍົກພວກເຈົ້າຂຶ້ນ ຍ້ອນຂ້ອຍປະກາດຂ່າວປະເສີດຂອງພຣະເຈົ້າໃຫ້ພວກເຈົ້າ
ໂດຍບໍ່ໄດ້ຄຶດຄ່າຕອບແທນອີຫຍັງ
11:8 ທັ່ກັບວ່າ ຂ້ອຍໄດ້ປຸ້ນພີ່ນ້ອງກຸ່ມຜູ້ເຊື່ອໝ້ອງອື່ນໆ ຄືໄດ້ຮັບເງິນຈາກເຂົາ
ເພື່ອຊິຮັບໃຊ້ພວກເຈົ້າໄດ້
11:9 ຄື ແມ່ນແຕ່ຂ້ອຍຂາດແຄນບໍ່ມີແນວຢູ່ແນວກິນຕອນຢູ່ນຳພວກເຈົ້າ ຂ້ອຍກໍບໍ່
ໄດ້ເປັນພາລະໃຫ້ຜູ້ໃດເລີຍ ຍ້ອນວ່າພີ່ນ້ອງທີ່ມາຈາກແຄວ້ນ ມາເກໂດເນຍ ໄດ້
ຊ່ອຍເຫລືອເຈືອຈານໃຫ້ຂ້ອຍມີພໍຢູ່ພໍກິນຕາມຄວາມຕ້ອງການ ຄືຂ້ອຍບໍ່ໄດ້ເປັນ
ພາລະໃຫ້ພວກເຈົ້າໃນຈັກແນວເລີຍ ແລ້ວຂ້ອຍກໍຊິຢູ່ຈັ່ງຊັ້ນຕໍ່ໄປ

11:10 ບໍ່ມີໃຜໃນເຂດແຄວ້ນ ອະຂາຢາ ຊິສາມາດຫ້າມຂ້ອຍໄວ້ບໍ່ໃຫ້ອວດເລື່ອງນີ້
ໄດ້ເລີຍ  ຄືຄວາມຈິງເລື່ອງ ພຣະຄຣິດ ມີຢູ່ໃນໂຕຂ້ອຍຢູ່ແລ້ວ
11:11 ຍ້ອນຫຍັງ ຍ້ອນຂ້ອຍບໍ່ຮັກແພງພວກເຈົ້າບໍ້ ພຣະເຈົ້າຮູ້ຈັກດີໃນເລື່ອງນີ້ຢູ່
ແລ້ວ
11:12 ແຕ່ແນວທີ່ຂ້ອຍເຮັດນັ້ນ ຂ້ອຍກໍຊິເຮັດຕໍ່ໄປ ເພື່ອຊິຕັດໂອກາດຄົນຊຸມນັ້ນທີ່
ຄອຍຖ້າຫາໂອກາດຢາກໃຫ້ຄົນອື່ນໆ  ຖືວ່າເຂົາຄືກັນກັບພວກເຮົາໃນແນວທີ່
ເຂົາອວດນັ້ນ
11:13 ຍ້ອນວ່າ ຄົນຈຳພວກນີ້ເປັນທູດທຽມ ເປັນຄົນງານທີ່ຫລອກລວງ ປອມໂຕວ່າ
ເຂົາເປັນທູດພິເສດຂອງ ພຣະຄຣິດ
11:14 ສົມພໍແມ່ນ ມັນເລີຍບໍ່ແປກອີຫຍັງດອກ ຂະໜາດ ພະຍາມານ ຊາຕານເອງກໍ
ຍັງສາມາດແປງໂຕເປັນເທວະທູດແຫ່ງຄວາມສະຫວ່າງໄດ້
11:15 ຈັ່ງຊັ້ນ ມັນບໍ່ເປັນເລື່ອງແປກອີຫຍັງ ທີ່ຜູ້ຮັບໃຊ້ຂອງ ພະຍາມານ ຊາຕານ
ສາມາດຊິປອມໂຕເປັນຜູ້ຮັບໃຊ້ທີ່ປະກາດທາງຄວາມຊອບທຳນັ້ນໄດ້  ຊຶ່ງຈຸດໝ
າຍປາຍທາງຂອງພວກເຂົາ ຊິເປັນໄປຕາມ ກິດຈະການ ແນວທີ່ເຂົາໄດ້ເຮັດ
11:16 ຂ້ອຍຂໍເວົ້າຊ້ຳອີກວ່າ ຢ່າໃຫ້ໃຜຄຶດເຫັນວ່າຂ້ອຍນີ້ເປັນຄົນບ້າ ບໍ່ຊັ້ນ ຢ່າງ-
ນ້ອຍໃຫ້ເຂົາຕ້ອນຮັບຂ້ອຍຄືກັນກັບຄົນບ້າ  ເພື່ອທົນເອົາຕໍ່ຂໍ້ອວດຂອງຂ້ອຍນັ້ນ
ໄດ້ນ້ອຍໆ
11:17 ແຕ່ແນວທີ່ຂ້ອຍອວດອ້າງຈັ່ງຊີ້  ຂ້ອຍບໍ່ໄດ້ເວົ້າຕາມການຊົງນຳຂອງອົງ-
ພຣະຜູ້ເປັນເຈົ້າດອກ  ແຕ່ໄດ້ເວົ້າດ້ວຍຄວາມໝັ້ນໃຈຄືເປັນຄົນບ້າຊື່ໆ
11:18 ຍ້ອນບັດເຫັນວ່າ ມີຫລາຍຄົນມັກຊິອວດຕາມເນື້ອໜັງ ຂ້ອຍກໍຊິລອງອວດ
ຈັ່ງຊັ້ນຄືກັນ
11:19 ການທີ່ພວກເຈົ້າສາມາດທົນເອົາຕໍ່ຄົນບ້າໄດ້ນັ້ນ ຄືຊິເປັນຍ້ອນວ່າ ພວກເຈົ້າ
ມີປັນຍາຫລາຍນໍ້
11:20 ຄືພວກເຈົ້າທົນເອົາໄດ້ ຄັ່ນມີໃຜນຳເອົາເຈົ້າໄປເປັນຂ້າທາດເຂົາກໍດີ ຫລືຄັ່ນ
ຊິມີໃຜເອົາປຽບຕົວະຕົ້ມເຈົ້າກໍດີ ຫລືຄັ່ນຊິມີໃຜມາລັກເອົາຊັບຂອງເຈົ້າໄປກໍດີ
ຫລືຄັ່ນຊິມີໃຜຍົກໂຕເປັນໃຫຍ່ຕໍ່ໜ້າເຈົ້າກໍດີ  ຫລືຄັ່ນຊິມີໃຜມາຕົບໜ້າເຈົ້າກໍດີ

11:21 ຄືເປັນຕາອັບອາຍທີ່ວ່າ ພວກເຮົາຍອມຮັບກັນວ່າເຮົາອ່ອນແອເກີນໄປທີ່ຊິ
ເຮັດແນວນີ້ໃສ່ພວກເຈົ້າ ບໍ່ວ່າໃຜຊິກ້າອວດໃນເລື່ອງໃດ (ຂ້ອຍພວມເວົ້າຢ່າງບ້າ
ອີກແລ້ວ) ຂ້ອຍກໍກ້າຫານຄືກັນ
11:22 ພວກເຂົາເປັນຄົນເຮັບເຣີບໍ້ ຂ້ອຍກໍເປັນຄືກັນ ພວກເຂົາເປັນຄົນ ອິສະຣາ-
ເອນ ບໍ້ ຂ້ອຍກໍເປັນຄືກັນ ພວກເຂົາເປັນເຊື້ອສາຍຂອງພໍ່ ອັບຣາຮາມ ບໍ້ ຂ້ອຍກໍ
ເປັນຄືກັນ
11:23 ພວກເຂົາວ່າເປັນຜູ້ຮັບໃຊ້ຂອງ ພຣະຄຣິດ ບໍ້ (ຂ້ອຍກໍຍັງເວົ້າຄືຄົນບ້າ) ຂ້ອຍ
ກໍແຮງເປັນກວ່າເຂົາຊະອີກ ຄືຂ້ອຍມີປະສົບການໃນການງານຫລາຍກວ່າ ເຄີຍ
ຖືກຂ້ຽນຕີເກີນຂະໜາດ ເຄີຍຖືກຈອງຈຳກັກຂັງໄວ້ຫລາຍກວ່າອີກ ແລ້ວເຄີຍ
ຫວິດລົ້ມຫວິດຕາຍຫລາຍເທື່ອນຳ
11:24 ແລ້ວເຄີຍຖືກພວກຢິວເອົາແສ້ຂ້ຽນຂ້ອຍຫ້າອ້ອມ ເປັນອ້ອມລະສາມສິບເກົ້າ
ເທື່ອ
11:25 ຂ້ອຍຖືກຟາດຕີດ້ວຍໄມ້ຄ້ອນສາມເທື່ອ ຖືກຄົນເອົາກ້ອນຫີນແກວ່ງໃສ່ເທື່ອ
ໜຶ່ງ ຜະເຊີນໄພເຮືອແຕກຈົມທະເລສາມເທື່ອ ເທື່ອໜຶ່ງຂ້ອຍຕ້ອງລອຍຄໍໃນ
ທະເລທັງກາງເວັນກາງຄືນ
11:26 ຂ້ອຍຕ້ອງເດີນທາງຫລາຍເທື່ອ ຜະເຊີນໄພອັນເປັນຕາຢ້ານທາງນໍ້າ ຜະເຊີນ
ໄພຈາກພວກໂຈນ ຜະເຊີນໄພຈາກ ໄທ ຊາດດຽວກັນຂອງຂ້ອຍເອງ ຜະເຊີນໄພ
ຈາກຄົນຕ່າງຊາດນຳ ຜະເຊີນໄພໃນເມືອງ ຜະເຊີນໄພໃນໂຄກໃນປ່າໃນທີ່ກັນ-
ດານ ຜະເຊີນໄພໃນທະເລ ຜະເຊີນໄພຈາກພີ່ນ້ອງຈອມປອມ
11:27 ເຄີຍຍາກລຳບາກເມື່ອຍລ້າ ເຈັບຕົນເຈັບໂຕຫລາຍ ເຄີຍອົດຫລັບອົດນອນ
ຫລາຍເທື່ອ ເຄີຍຫິວເຂົ້າຫິວນໍ້າ ເຄີຍທົນໜາວຈັດ ເຄີຍຂາດເສື້ອຜ້າໜ້າແພ
11:28 ນອກຈາກແນວໝູ່ນີ້ແລ້ວ ກໍຍັງມີຫລາຍແນວທີ່ໂຕຂ້ອຍຕ້ອງຮັບຜິດຊອບ
ແບກພະລະຢູ່ຄູ່ມື້ຄູ່ເວັນ ຄືການເບິ່ງແຍງເປັນຫ່ວງພີ່ນ້ອງກຸ່ມຜູ້ເຊື່ອທັງມວນນຳ
11:29 ມີໃຜແໜ່ເປັນຄົນອ່ອນກຳລັງ ແລ້ວຂ້ອຍບໍ່ໄດ້ອ່ອນກຳລັງນຳ ມີໃຜແໜ່ທີ່
ຖືກເຮັດໃຫ້ສະດຸດ ທີ່ຂ້ອຍບໍ່ໄດ້ເປັນທຸກເປັນຮ້ອນນຳ

11:30 ຄັນຂ້ອຍຊິຕ້ອງອວດ ຂ້ອຍກໍຊິອວດໃນແນວຕ່າງໆ ທີ່ເປັນເຫດໃຫ້ຂ້ອຍ
ຕ້ອງອ່ອນກຳລັງ
11:31 ພຣະເຈົ້າ ຜູ້ເປັນພໍ່ຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຜູ້ເພິ່ນທີ່ສົມຄວນ
ຊິໄດ້ຮັບການຍົກຍ້ອງສັນລະເສີນຢູ່ຕະຫລອດການເປັນນິດ ເພິ່ນກໍຮູ້ຈັກດີວ່າ
ຂ້ອຍເວົ້າຄວາມຈິງໝົດ ບໍ່ໄດ້ຕົວະເລີຍ
11:32 ແລ້ວເຈົ້າເມືອງຜູ້ຢູ່ໃຕ້ກະສັດ ອາເຣໂຕ ໃນເມືອງ ດາມາເຊ ນັ້ນ ໄດ້ສົ່ງກອງ-
ທະຫານຖືຮັກສາສະພາບການອອກໄປເຝົ້າເມືອງນັ້ນໄວ້ ເພື່ອໃຫ້ຈັບໂຕຂ້ອຍ
11:33 ແຕ່ໝູ່ພວກກໍໄດ້ເອົາໂຕຂ້ອຍໃສ່ກະບຸງ ຢ່ອນລົງທາງປ່ອງໜ້າຕ່າງຢູ່ເທິງ
ກຳແພງເມືອງ ຂ້ອຍຈັ່ງຫວິດພົ້ນຈາກເນື້ອມືຂອງເຈົ້າເມືອງນັ້ນ

## 2 ໂກຣິນໂທ ບົດທີ 12

12:1 ມັນຊິບໍ່ເປັນການສົມຄວນດອກຄັ່ນຊິໃຫ້ຂ້ອຍເວົ້າອວດ ຂ້ອຍເລີຍຊິເວົ້າສູ່ກັນ
ຟັງຕໍ່ໄປເລື່ອງນິມິດໝາຍກັບການເປີດເຜີຍແນວຕ່າງໆ ຊຶ່ງມາຈາກອົງພຣະຜູ້-
ເປັນເຈົ້າ
12:2 ຄືສິບສີ່ປີມາແລ້ວຂ້ອຍໄດ້ຮູ້ຈັກຜູ້ຊາຍຜູ້ໜຶ່ງໃນ ພຣະຄຣິດ ລາວ ໄດ້ຖືກຮັບ
ເອົາຂຶ້ນໄປເທິງສະຫວັນຊັ້ນທີ່ສາມ (ແຕ່ວ່າທີ່ ລາວ ໄປຫັ້ນ ໄດ້ຢູ່ໃນຮ່າງກາຍ ຫລື
ນອກຮ່າງກາຍ ຂ້ອຍກໍບອກບໍ່ຖືກເລີຍ ແຕ່ວ່າພຣະເຈົ້າເພິ່ນກໍຮູ້ຈັກ)
12:3 ແລ້ວຂ້ອຍກໍຮູ້ຈັກຜູ້ຊາຍຜູ້ນັ້ນອີຫລີ (ແຕ່ວ່າ ລາວ ໄດ້ຂຶ້ນໄປໃນຮ່າງກາຍຫລື
ນອກຮ່າງກາຍ ຂ້ອຍກໍບອກບໍ່ຖືກ ແຕ່ວ່າພຣະເຈົ້າເພິ່ນກໍຮູ້ຈັກຢູ່ດອກ)
12:4 ຄືຄົນນັ້ນໄດ້ຖືກຮັບຂຶ້ນໄປເທິງເມືອງສຸກຂະເສີມ ກັບ ລາວ ໄດ້ຍິນວາຈາແນວ
ທີ່ມະນຸດບໍ່ສາມາດໃຫ້ຄຳບັນລະຍາຍໄດ້ເລີຍ ແລ້ວກໍເປັນວາຈາແນວທີ່ບໍ່ອະນຸ-
ຍາດໃຫ້ມະນຸດເວົ້າໄດ້ນຳ
12:5 ແລ້ວຄົນຄືຜູ້ຊາຍຜູ້ນັ້ນ ຂ້ອຍຊິອວດໄດ້ ແຕ່ຝ່າຍໂຕຂ້ອຍນີ້ ຂ້ອຍບໍ່ມີອີຫຍັງ
ເລີຍທີ່ຊິອວດໄດ້ ນອກຈາກຊິອວດໃນເລື່ອງຄວາມອ່ອນແອຂອງຂ້ອຍ
12:6 ຄື ແມ່ນແຕ່ຂ້ອຍ ອາດ ຊິຄຶດຢາກອວດ ຂ້ອຍຊິບໍ່ເປັນຄົນບ້າຈັ່ງຊັ້ນດອກ ຄື
ຂ້ອຍຊິເວົ້າຕາມແຕ່ແນວເປັນຈິງ ແຕ່ສຳລັບເລື່ອງນັ້ນ ຂ້ອຍຂໍອຳໄວ້ ຢ້ານວ່າຜູ້
ລາງຄົນ ອາດ ຊິຖືຂ້ອຍເກີນກວ່າທີ່ສົມຄວນຕາມທີ່ເຂົາເຫັນກັບຟັງຈາກຂ້ອຍ

12:7 แล้วเพื่อข้อยຊິບໍ່ໄດ້ຮັບການຍົກຍ້ອງເກີນໂຕຍ້ອນນິມິດແບວໝູ່ນັ້ນທີ່ເປີດ-
ເຜີຍໃຫ້ໂຕຂ້ອຍ ໄດ້ໂຜດໃຫ້ມີໜາມປັກສຽບໄວ້ໃນໂຕຂ້ອຍ ແລ້ວອຸປະສັກນັ້ນ
ເປັນທູດຂອງ ພະຍາມານ ຊາຕານທີ່ບຽດບຽນໂຕຂ້ອຍ ກໍເພື່ອຂ້ອຍຊິບໍ່ຖືກການ
ຍົກຍ້ອງນັບຖືເກີນທີ່ຄວນ
12:8 ອຸປະສັກນີ້ ຂ້ອຍຂໍຮ້ອງວິງວອນຕໍ່ເພິ່ນເຖິງສາມເທື່ອ ໃຫ້ມັນອອກຈາກຂ້ອຍ
ໄປ
12:9 ແລ້ວເພິ່ນຕອບຂ້ອຍວ່າ "ຄວາມພຣະຄຸນຂອງເຮົາພຽງພໍສຳລັບເຈົ້າແລ້ວ
ຍ້ອນວ່າລິດອຳນາດຂອງເຮົາສາມາດປາກົດອອກເຕັມທີ່ຜ່ານການອ່ອນກຳລັງ"
ຈັ່ງຊັ້ນຂ້ອຍຈັ່ງຍິນດີອວດໃນອຸປະສັກຕ່າງໆ ທີ່ຂ້ອຍມີນັ້ນ ເພື່ອລິດອຳນາດຂອງ
ພຣະຄຣິດ ຊິປົກຄອງຢູ່ເໜືອໂຕຂ້ອຍ
12:10 ຈັ່ງຊັ້ນ ຂ້ອຍຊິຍິນດີໃນອຸປະສັກຕ່າງໆ ທີ່ເຮັດໃຫ້ຂ້ອຍອ່ອນກຳລັງ ຄືການ
ຖືກເວົ້າໃສ່ຮ້າຍຕ່າງໆ ການທຸກຍາກລຳບາກອຶດຢາກ ການຖືກຂົ່ມເຫງ ການ
ຍາກລຳບາກ ເພື່ອເຫັນແກ່ ພຣະຄຣິດ ໂດຍວ່າ ຂ້ອຍອ່ອນກຳລັງຍາມໃດ ຂ້ອຍ
ກໍແຮງຊິມີກຳລັງໃນຍາມນັ້ນ
12:11 ໃນການອວດນັ້ນຂ້ອຍຄືຊິເປັນບ້າ ແລ້ວ ແຕ່ແມ່ນພວກເຈົ້ານັ້ນເນາະທີ່ຈູງໃຈ
ໃຫ້ຂ້ອຍເຮັດ ຍ້ອນວ່າສົມຄວນແລ້ວທີ່ພວກເຈົ້າຊິຍົກຍ້ອງໃຫ້ກຽດຂ້ອຍຈັກ-
ໜ່ອຍແໜ່ ຄືເຖິງແມ່ນຂ້ອຍຊິບໍ່ວິເສດອີຫຍັງດອກ ຂ້ອຍກໍບໍ່ໄດ້ຕ່ຳຕ້ອຍກວ່າທູດ-
ພິເສດຊັ້ນຜູ້ໃຫຍ່ຊຸມນັ້ນຈັກແນວເລີຍ
12:12 ແທ້ຈິງແລ້ວ ສັນຍະລັກຕ່າງໆ ອັນບົ່ງບອກເຖິງການເປັນທູດພິເສດຂອງ
ພຣະເຈົ້າຂອງພວກເຮົານັ້ນ ໄດ້ເກີດໃນທ່າງກາງພວກເຈົ້າ ດ້ວຍຄວາມພາກ-
ພຽນອົດເຈນແລ້ວ ໂດຍເຫດການແນວສຳຄັນ ໂດຍແນວມະຫັດສະຈັນ ກັບລິດ-
ທານຸພາບ ຕ່າງໆ ຈາກພຣະເຈົ້າ
12:13 ຄັນບໍ່ຊັ້ນ ພວກເຈົ້າຕ່ຳຕ້ອຍກວ່າພີ່ນ້ອງກຸ່ມຜູ້ເຊື່ອອື່ນໆ ໃນຂໍ້ໃດ ເວັ້ນແຕ່ວ່າ
ຂ້ອຍບໍ່ເຄີຍເປັນພາລະອີຫຍັງໃຫ້ກັບພວກເຈົ້າຈັກເທື່ອເລີຍ ຂ້ອຍຈັ່ງຂໍອະໄພ
ຢ່າງສູງໃນການຜິດພາດນັ້ນເດີ້

12:14 ນີ້ແຫລະ ຂ້ອຍກຽມພ້ອມແລ້ວທີ່ຊິມາຍາມພວກເຈົ້າເປັນເທື່ອທີ່ສາມ ແລ້ວ
ບັດຂ້ອຍມາຂ້ອຍຊິບໍ່ເປັນພາລະໃຫ້ພວກເຈົ້າດອກ ຍ້ອນວ່າຂ້ອຍບໍ່ໄດ້ຫວັງອີ-
ຫຍັງຈາກພວກເຈົ້າເລີຍ ນອກຈາກໂຕພວກເຈົ້າເອງ ໂດຍວ່າ ຜູ້ເປັນລູກບໍ່ຄວນ
ຊິສະສົມອີຫຍັງໄວ້ໃຫ້ພໍ່ແມ່ດອກ ແຕ່ພໍ່ແມ່ຄວນຊິສະສົມນໍລະດົກໄວ້ໃຫ້ລູກໆ
12:15 ກັບຂ້ອຍມີຄວາມຍິນດີຫລາຍທີ່ຊິເສຍສະລະໝົດຄູ່ແນວ ພ້ອມທັງຊີວິດໂຕ
ເອງເພື່ອພວກເຈົ້າ ແມ່ນແຕ່ພໍບັດຂ້ອຍຮັກພວກເຈົ້າຫລາຍຂຶ້ນ ພວກເຈົ້າກໍຮັກ
ໂຕຂ້ອຍນ້ອຍລົງ
12:16 ຈັ່ງໃດກໍຕາມ ເຖິງແມ່ນວ່າຂ້ອຍບໍ່ໄດ້ເປັນພາລະອີຫຍັງໃຫ້ພວກເຈົ້າ ຂ້ອຍ
ຈັ່ງໃຊ້ລູກຫລິ້ນເປັນກັບດັກໂກງເອົາພວກເຈົ້າ ຄືເປັນເຈົ້າເລ້ກົນເນາະ
12:17 ຂ້ອຍໄດ້ເອົາປຽບພວກເຈົ້າອີຫລີຢູ່ບໍ້ ຕອນຂ້ອຍໄດ້ສົ່ງໝູ່ພີ່ນ້ອງມາຊ່ອຍ
ພວກເຈົ້ານັ້ນ
12:18 ຄືຕອນຂ້ອຍໄດ້ໃຊ້ ຕີໂຕ ກັບພີ່ນ້ອງອີກຄົນໜຶ່ງມານັ້ນ ແລ້ວ ຕີໂຕ ລາວ ໄດ້
ເອົາປຽບອີຫຍັງຈາກພວກເຈົ້າບໍ້ ບໍ່ແມ່ນເຮົາທັງສອງໄດ້ດຳເນີນດ້ວຍນ້ຳໜຶ່ງໃຈ
ດຽວກັນບໍ້ ກັບບໍ່ແມ່ນວ່າເຮົາໄດ້ດຳເນີນຕາມຮອຍດຽວກັນຄູ່ບາດຍ່າງບໍ້
12:19 ຂໍຖາມອີກວ່າ ພວກເຈົ້າຍັງຄຶດວ່າພວກເຮົາຫາແກ້ໂຕຕໍ່ພວກເຈົ້າບໍ້ ຄືແນວທີ່
ພວກເຮົາເວົ້ານີ້ເຮົາເວົ້າຕໍ່ໜ້າພຣະເຈົ້າໂດຍໃນ ພຣະຄຣິດ ແຕ່ສ່ວນແນວທີ່ເຮົາ
ເຮັດ ເຮົາເຮັດໝົດຄູ່ແນວເພື່ອເສີມສ້າງໃຫ້ພວກເຈົ້າຈະເລີນຂຶ້ນ ພີ່ນ້ອງທີ່ຮັກເອີຍ
12:20 ຂ້ອຍຢ້ານວ່າ ບັດຂ້ອຍມາ ພວກເຈົ້າ ອາດ ຊິຢູ່ໃນສະພາບທີ່ຂ້ອຍບໍ່ຢາກ
ເຫັນ ກັບວ່າຂ້ອຍ ອາດ ຊິມີອາລົມແບບທີ່ພວກເຈົ້າບໍ່ຢາກເຫັນຄືກັນ ຢ້ານວ່າໃນ
ໝູ່ພວກເຈົ້າ ອາດ ຊິມີການວິວາດກັນ ລິດສະຫຍາກັນ ຄຽດກັນ ມັກໃຫຍ່ໄຝ່ສູງ
ນິນທາກັນ ຊຸບຊິບສໍ່ສຽດກັນ ຈອງຫອງພອງໂຕ ກັບຄວາມວຸ້ນວາຍກັນ
12:21 ຫລື ອາດ ເປັນວ່າ ບັດຂ້ອຍມາຫາອີກນັ້ນ ພຣະເຈົ້າຂອງຂ້ອຍເພິ່ນຊິໃຫ້
ຂ້ອຍຖ່ອມລົງ ຂ້ອຍຈັ່ງເສົ້າໃຈຫລາຍຕອນຢູ່ນຳພວກເຈົ້າ ຍ້ອນມີຫລາຍຄົນທີ່ຍັງ
ຮວມກັນແຕ່ໃນການບາບ ແລ້ວຍັງບໍ່ໄດ້ສຳນຶກຜິດ ຖິ້ມແນວໂສໂຄກ ແນວຜິດ
ປະເວນີ ກັບແນວລາມົກຕ່າງໆ ຊຶ່ງເຂົາໄດ້ເຮັດຢູ່ຫັ້ນ

# 2 ໂກຣິນໂທ ບົດທີ 13

13:1 ເທື່ອນີ້ຊິເປັນເທື່ອທີ່ສາມທີ່ຂ້ອຍຊິມາຫາພວກເຈົ້າ "ແລ້ວຄໍາກ່າວຫາຄູ່ຄໍານັ້ນ
ຕ້ອງມີຄໍາພະຍານຈາກສອງສາມປາກ ຈັ່ງຊິຢືນໝັ້ນເປັນຫຼັກຖານໄດ້"
13:2 ຄືຂ້ອຍໄດ້ບອກພວກເຈົ້າແຕ່ກ່ອນ ກັບໄດ້ບອກເຈົ້າອີກເທື່ອທີ່ສອງນັ້ນ ແລ້ວ
ໃນບັດນີ້ບໍ່ວ່າຂ້ອຍບໍ່ໄດ້ຢູ່ນໍາ ແຕ່ຂ້ອຍກໍຍັງຂຽນຝາກຈົດໝາຍນີ້ ຮຽນສະເພາະຜູ້
ທີ່ເຮັດຜິດມາກ່ອນນັ້ນ ພ້ອມທັງຜູ້ອື່ນນໍາ ວ່າ ຄັ່ນຂ້ອຍມາອີກ ຂ້ອຍຊິບໍ່ຍົກເວັ້ນ
ໃຜເລີຍ
13:3 ເນື່ອງຈາກວ່າ ພວກເຈົ້າຕ້ອງການພິສູດວ່າ ພຣະຄຣິດ ເວົ້າທາງຂ້ອຍນີ້
ຄວາມສາມາດຂອງເພິ່ນບໍ່ໄດ້ອ່ອນຕໍ່ພວກເຈົ້າດອກ ແຕ່ມີອໍານາດຫລາຍຢູ່
ຫວ່າງກາງໝູ່ພວກເຈົ້າ
13:4 ຄື ແມ່ນວ່າເພິ່ນຖືກຄຶງຕອນອ່ອນກໍາລັງ ແຕ່ໃນບັດນີ້ເພິ່ນດໍາລົງຊີວິດຢູ່ໂດຍ
ລິດທານຸພາບຂອງພຣະເຈົ້າ ແລ້ວຝ່າຍພວກເຮົາກໍຍັງອ່ອນກໍາລັງນໍາເພິ່ນ ແຕ່ຊິ
ໄດ້ມີຊີວິດດໍາລົງຢູ່ນໍາເພິ່ນໂດຍລິດທານຸພາບຂອງພຣະເຈົ້າ ກໍເພື່ອຜົນປະໂຫຍດ
ຂອງພວກເຈົ້າ
13:5 ໃຫ້ພວກເຈົ້າພິຈາລະນາເບິ່ງໂຕເອງເດີ້ ວ່າພວກເຈົ້າໄດ້ຕັ້ງຢູ່ໃນຄວາມເຊື່ອ
ອີຫລີຫລືບໍ່ ໃຫ້ພິສູດໂຕເອງເດີ້ ພວກເຈົ້າບໍ່ຮູ້ບໍ້ວ່າ ພຣະເຢຊູຄຣິດ ໄດ້ສະຖິດຢູ່-
ໃນພວກເຈົ້າ ນອກຈາກວ່າພວກເຈົ້າບໍ່ຜ່ານໃນການພິສູດນັ້ນ
13:6 ແຕ່ຂ້ອຍເຊື່ອວ່າ ພວກເຈົ້າຊິຮູ້ຈັກດີວ່າ ພວກເຮົາໄດ້ຜ່ານການພິສູດນັ້ນແລ້ວ
13:7 ບັດນີ້ ຂ້ອຍອະທິຖານເວົ້ານໍາພຣະເຈົ້າເພື່ອພວກເຈົ້າຊິບໍ່ເຮັດແນວຊົ່ວເລີຍ ບໍ່
ແມ່ນເພື່ອພວກເຮົາຊິໄດ້ເປັນທີ່ຍອມຮັບໃນສາຍຕາພວກເຈົ້າ ແຕ່ເພື່ອພວກເຈົ້າຊິ
ເຮັດແຕ່ແນວຖືກແນວແມ່ນ ບໍ່ວ່າພວກເຮົາ ອາດ ຊິບໍ່ໄດ້ເປັນທີ່ຍອມຮັບຕໍ່ພວກ
ເຈົ້າກໍຕາມ
13:8 ຄືພວກເຮົາບໍ່ສາມາດເຮັດອີຫຍັງທີ່ຂັດຕໍ່ຄວາມຈິງໄດ້ ມີແຕ່ເຮັດເພື່ອຄວາມ-
ຈິງ

13:9 ຍ້ອນວ່າ ບັດຍາມພວກເຮົາອ່ອນກຳລັງ ແລ້ວພວກເຈົ້າເຂັ້ມແຂງ ພວກເຮົາກໍ
ຍັງຍິນດີນຳ ຄືພວກເຮົາອະທິຖານຢາກໃຫ້ພວກເຈົ້າເປັນຜູ້ໃຫຍ່ໃນ ພຣະຄຣິດ
ຢ່າງຄົບບໍລິບູນ
13:10 ຈັ່ງຊັ້ນ ຂ້ອຍຈັ່ງຂຽນຂໍ້ຄວາມນີ້ບັດຍາມຂ້ອຍບໍ່ໄດ້ຢູ່ນຳ ຄືຄັ່ນວ່າຂ້ອຍຢູ່ນຳ
ຂ້ອຍ ອາດ ຊິເວົ້າແຮງຕາມສິດອຳນາດທີ່ພຣະເຈົ້າໄດ້ມອບໝາຍໄວ້ໃຫ້ຂ້ອຍນັ້ນ
ກໍເພື່ອການເສີມສ້າງໃຫ້ຈະເລີນຂຶ້ນ ບໍ່ແມ່ນເພື່ອການທຳລາຍ
13:11 ສຸດທ້າຍນີ້ ຂໍລາກ່ອນເດີ້ ພີ່ນ້ອງທັງຫລາຍ ເອີຍ ຂໍໃຫ້ພວກເຈົ້າເປັນຜູ້ໃຫຍ່
ຢ່າງຄົບບໍລິບູນເດີ້ ໃຫ້ຮັບການປອບໂຍນໃຈໃຫ້ຢູ່ດີມີແຮງເດີ້ ໃຫ້ເປັນນ້ຳໜຶ່ງໃຈ
ດຽວກັນເດີ້ ໃຫ້ຢູ່ຮ່ວມກັນຢ່າງສັນຕິພາບເດີ້ ແລ້ວຂໍໃຫ້ພຣະເຈົ້າຜູ້ມີຄວາມຮັກ
ມີສັນຕິພາບ ສະຖິດຢູ່ກັບພວກເຈົ້າເຖີດ
13:12 ໃຫ້ທັກທາຍກັນດ້ວຍທຳນຽມອັນດີງາມບໍລິສຸດເດີ້
13:13 ພີ່ນ້ອງທັງຫລາຍຂອງພຣະເຈົ້າໄດ້ຝາກຄວາມຄຶດຮອດມາຫາພວກເຈົ້ານຳ
13:14 ຂໍໃຫ້ພຣະກະລຸນາທິຄຸນຂອງພຣະເຢຊູຄຣິດເຈົ້າ ຄວາມຮັກແພງຂອງພຣະ-
ເຈົ້າຜູ້ເປັນພໍ່ ກັບຄວາມສາມັກຄີຊຶ່ງມາຈາກ ພຣະວິນຍານ ບໍລິສຸດ ດຳລົງຢູ່ກັບ
ພວກເຈົ້າເຖີດ ອາເມນ

# ຄາລາເຕຍ

## ຄາລາເຕຍ ບົດທີ 1

1:1 ຈາກ ໂປໂລ ຜູ້ເປັນທູດພິເສດ *ຂອງ ພຣະເຢຊູຄຣິດ* (ບໍ່ແມ່ນດ້ວຍຄົນ ຫລືບໍ່
ໄດ້ຜ່ານການແຕ່ງຕັ້ງຂອງຄົນ ແຕ່ວ່າໂດຍ ພຣະເຢຊູຄຣິດ ກັບໂດຍພຣະເຈົ້າຜູ້
ເປັນພໍ່ ຜູ້ເພິ່ນທີ່ໂຜດໃຫ້ ພຣະເຢຊູ ເປັນຂຶ້ນມາຈາກຕາຍ)
1:2 ກັບຈາກພວກພີ່ນ້ອງຄູ່ຄົນທີ່ຢູ່ນຳຂ້ອຍທາງນີ້ນຳ ຮຽນພີ່ນ້ອງໃນກຸ່ມຜູ້ເຊື່ອຢູ່
ເມືອງ ຄາລາເຕຍ
1:3 ຂໍໃຫ້ພຣະກະລຸນາທິຄຸນ ກັບສັນຕິພາບຈາກພຣະເຈົ້າ ຜູ້ເປັນພໍ່ ກັບຈາກພຣະ-
ເຢຊູຄຣິດເຈົ້າ ຄຸ້ມຄອງຮັກສາພວກເຈົ້າໄວ້ເດີ້

1:4 ຜູ້ເພິ່ນໄດ້ຍອມສະລະຊີວິດຍ້ອນບາບຂອງເຮົາ ເພື່ອຊິກອບກູ້ພວກເຮົາໃຫ້
ລອດພົ້ນແນວຊົ່ວຮ້າຍທາງໂລກນີ້ ຕາມພຣະປະສົງຂອງພຣະເຈົ້າຜູ້ເປັນພໍ່ຂອງ
ພວກເຮົາ
1:5 ສາທຸການພຣະເຈົ້າ ຜູ້ສົມຄວນໄດ້ຮັບການຍົກຍ້ອງຖວາຍກຽດຢູ່ຕະຫລອດ-
ການ ອາເມນ
1:6 ບັດນີ້ ຂ້ອຍເປັນຕາງຶດຫລາຍທີ່ວ່າ ບໍດຽວພວກເຈົ້າໄດ້ຫັນຫລັງໃຫ້ພຣະເຈົ້າ
ແລ້ວ ຜູ້ເພິ່ນໄດ້ເອີ້ນພວກເຈົ້າເຂົ້າມາສູ່ພຣະຄຸນຂອງເພິ່ນທາງ ພຣະຄຣິດ ຫັນ
ໄປຕິດຕາມຂ່າວປະເສີດຈອມປອມ
1:7 ຊຶ່ງບໍ່ແມ່ນຂ່າວອື່ນໆ ດອກ ແຕ່ວ່າມີຜູ້ລາງຄົນໄດ້ມາກໍ່ກວນພວກເຈົ້າ ມາບິດ-
ເບືອນຂ່າວປະເສີດເລື່ອງ ພຣະຄຣິດ ນັ້ນ
1:8 ແຕ່ວ່າ ຄັນພວກຂ້ອຍເອງ ຫລືເທວະທູດຈາກສະຫວັນ *ຫລືໃຜກໍຢ່າ* ມາປະ-
ກາດຂ່າວປະເສີດອື່ນໆ ໃຫ້ພວກເຈົ້າຟັງ ທີ່ບິດບ້ຽວຈາກຂ່າວປະເສີດທີ່ພວກເຮົາ
ໄດ້ມາປະກາດແລ້ວ ກໍຂໍໃຫ້ເຂົາຖືກການສາບແຊ່ງເດີ້
1:9 ຕາມທີ່ພວກຂ້ອຍເຄີຍບອກມາແລ້ວ ຂ້ອຍຂໍຊ້ຳອີກວ່າ ຄັນຜູ້ໃດມາເວົ້າມາ
ສອນຂ່າວປະເສີດຈອມປອມໃຫ້ພວກເຈົ້າຟັງ ທີ່ບິດບ້ຽວໄປຈາກຂ່າວປະເສີດທີ່
ຂ້ອຍເຄີຍບອກສອນພວກເຈົ້າມາແລ້ວ ກໍໃຫ້ມັນຖືກພຣະເຈົ້າສາບແຊ່ງເດີ້
1:10 ບັດນີ້ ຂ້ອຍພວມຊອກການຍອມຮັບຈາກຄົນຫລືຈາກພຣະເຈົ້າ ຄືຂ້ອຍພວມ
ຊອກເອົາໃຈຄົນບໍ້ ຄັນຂ້ອຍຍັງຊອກເອົາໃຈຄົນ ຂ້ອຍບໍ່ສົມຄວນຊິເປັນຜູ້ຮັບໃຊ້
ຂອງ ພຣະຄຣິດ ເລີຍ
1:11 ແຕ່ວ່າ ພີ່ນ້ອງເອີຍ ຂ້ອຍຂໍຢືນຢັນວ່າ ຂ່າວປະເສີດທີ່ຂ້ອຍໄດ້ບອກໄດ້ສອນ
ພວກເຈົ້ານັ້ນ ມັນບໍ່ແມ່ນແນວຄວາມຄິດຕາມທີ່ຄົນຕັ້ງຂຶ້ນມາ
1:12 ແລ້ວຂ້ອຍບໍ່ໄດ້ຮັບຂ່າວປະເສີດມາຈາກຜູ້ໃດເລີຍ ບໍ່ມີໃຜໄດ້ສອນໄດ້ບອກ
ຂ້ອຍດອກ ແຕ່ວ່າ ພຣະເຢຊູຄຣິດ ເອງ ເປັນຜູ້ທີ່ເປີດເຜີຍໃຫ້ຂ້ອຍຮູ້ຈັກທາງນິມິດ
ໝາຍ

1:13 ພວກເຈົ້າເຄີຍໄດ້ຍິນເຖິງປະຫວັດຂອງຂ້ອຍຢູ່ແລ້ວ ວ່າຕອນຢູ່ໃນສາສະໜາ
ຢິວ ນັ້ນ ຂ້ອຍໄດ້ຊອກຂົ່ມເຫງກຸ່ມຜູ້ເຊື່ອຂອງພຣະເຈົ້າຢ່າງໂຫດຫ້ຽມ ຈັ່ງພະຍາ-
ຍາມທຳລາຍໃຫ້ໝົດໄປ
1:14 ແລ້ວຕອນນັ້ນ ຂ້ອຍໄດ້ພັດທະນາກ້າວໜ້າທາງສາສະໜາ ຢິວ ເດັ່ນກວ່າໝູ່
ຫລາຍຄົນໃນປະເທດຂອງຂ້ອຍ ຍ້ອນວ່າຂ້ອຍມີໃຈຮ້ອນຮົນ ໄດ້ປະຕິບັດຕາມ
ຮີດຄອງປະເພນີຂອງພໍ່ຕະກູນຢ່າງເຄັ່ງຄັດກວ່າໝູ່
1:15 ແຕ່ວ່າພໍເຖິງຍາມທີ່ພຣະເຈົ້າພໍໃຈ ຜູ້ເພິ່ນໄດ້ເລືອກຂ້ອຍໄວ້ຕັ້ງແຕ່ຢູ່ໃນທ້ອງ
ແມ່ ເພິ່ນກໍໄດ້ເອີ້ນໄດ້ເຊີນຂ້ອຍມາໂດຍທາງພຣະຄຸນຂອງເພິ່ນ
1:16 ເພື່ອຊິໄດ້ເປີດເຜີຍໃຫ້ໂຕຂ້ອຍຮູ້ຈັກກັບ ພຣະບຸດ ຂອງເພິ່ນ ເພື່ອໃຫ້ຂ້ອຍ
ອອກໄປປະກາດຕໍ່ພວກຄົນຕ່າງຊາດ ແລ້ວໃນຕອນທີ່ພຣະເຈົ້າໄດ້ເອີ້ນຂ້ອຍນັ້ນ
ຂ້ອຍບໍ່ໄດ້ຟ້າວອອກໄປປຶກສາຫາລືນຳຄົນດອກ
1:17 ກັບຂ້ອຍບໍ່ໄດ້ຂຶ້ນໄປເມືອງ ເຢຣູຊາເລັມ ໄປຫາພວກທູດພິເສດຜູ້ອື່ນໆ ທີ່
ເປັນທູດພິເສດກ່ອນຂ້ອຍ ແຕ່ຂ້ອຍໄດ້ເດີນທາງໄປເຂດ ອາຣາເບຍ ກ່ອນ ແລ້ວ
ກໍໄດ້ຫລົບມາຍັງເມືອງ ດາມາເຊ ອີກ
1:18 ແລ້ວຢູ່ມາອີກສາມປີ ຂ້ອຍຈັ່ງຂຶ້ນໄປເມືອງ ເຢຣູຊາເລັມ ເພື່ອໄປຫາ ເປໂຕ
ແລ້ວກໍໄດ້ພັກຢູ່ນຳ ລາວ ສິບຫ້າມື້
1:19 ແຕ່ວ່າ ຕອນນັ້ນຂ້ອຍບໍ່ໄດ້ຮັບກັບພວກທູດພິເສດຜູ້ອື່ນໆ ນອກຈາກ ຢາໂກ-
ໂບ ນ້ອງຊາຍຂອງອົງ ພຣະເຢຊູເຈົ້າ
1:20 (ບັດນີ້ ແນວທີ່ຂ້ອຍຂຽນມາຫາພວກເຈົ້ານີ້ ຂ້ອຍຂໍຢືນຢັນຕໍ່ພຣະເຈົ້າວ່າ
ຂ້ອຍບໍ່ໄດ້ຕົວະເລີຍ)
1:21 ຢູ່ມາ ຂ້ອຍໄດ້ເຂົ້າໄປໃນເຂດເມືອງ ຊີເຣຍ ກັບເຂດເມືອງ ກີລີເກຍ
1:22 ແລ້ວ ກຸ່ມຜູ້ເຊື່ອຢູ່ເຂດເມືອງ ຢູດາຍ ຍັງບໍ່ຮູ້ຈັກໜ້າຂອງຂ້ອຍ
1:23 ພຽງແຕ່ເຂົາເຄີຍໄດ້ຍິນຂ່າວເລື່ອງຂ້ອຍວ່າ “ຜູ້ທີ່ເຄີຍຂົ່ມເຫງທຳລາຍພວກ
ເຮົາມາກ່ອນ ບັດນີ້ ເຂົາພວມປະກາດເລື່ອງຄວາມເຊື່ອນັ້ນ ທີ່ເຂົາເຄີຍພະຍາ-
ຍາມທຳລາຍມາກ່ອນ”
1:24 ແລ້ວພວກເຂົາຈັ່ງໄດ້ຍົກຍ້ອງຖວາຍກຽດພຣະເຈົ້າຍ້ອນໂຕຂ້ອຍນີ້

# ຄາລາເຕຍ ບົດທີ 2

2:1 ແລ້ວຢູ່ຕໍ່ມາອີກສິບສີ່ປີ ຂ້ອຍຈັ່ງໄດ້ຂຶ້ນໄປເມືອງ ເຢຣູຊາເລັມ ອີກ ກັບ ບາຣະ-
ນາບາ ແລ້ວພາ ຕິໂຕ ໄປນຳ
2:2 ຂ້ອຍໄດ້ຂຶ້ນໄປຕາມນິມິດໝາຍ *ຈາກພຣະເຈົ້າ* ຈັ່ງນຳເລື່ອງຂ່າວປະເສີດທີ່
ຂ້ອຍປະກາດໃຫ້ພວກຕ່າງຊາດນັ້ນ ໄປເວົ້າໃຫ້ເຂົາຟັງ ແຕ່ໄດ້ເວົ້າໃຫ້ພວກຜູ້-
ຫລັກຜູ້ໃຫຍ່ຢູ່ນັ້ນຟັງເປັນການສ່ວນໂຕ ຄັນບໍ່ຊັ້ນ ຢ້ານວ່າການທີ່ຂ້ອຍໄດ້ປະ-
ກາດມາແລ້ວນັ້ນ ກັບຍັງປະກາດຢູ່ ອາດ ບໍ່ປະໂຫຍດຊື່ໆ
2:3 ແລ້ວເຖິງແມ່ນວ່າ ຕິໂຕ ຊຶ່ງເປັນຄົນເກຣັກ *ທີ່ບໍ່ເຮັດພິທີຕັດແບບຄົນ ຢິວ* ໄດ້
ໄປນຳ ພວກເຂົາບໍ່ໄດ້ພະຍາຍາມບັງຄັບ ລາວ ໃຫ້ເຮັດພິທີຕັດນຳເຂົາ
2:4 ອັນນີ້ກໍຍ້ອນວ່າມີພວກພີ່ນ້ອງຈອມປອມໄດ້ເຂົ້າມາ ແນະນຳດ້ວຍທາງລັບໃຫ້
ເຮັດແນວນັ້ນ (ຄືພວກນັ້ນໄດ້ແອບເຂົ້າມາ ເພື່ອຈອບເບິ່ງພວກເຮົາທີ່ມີເສລີພາບ
ໃນ ພຣະເຢຊູຄຣິດ ຢາກໃຫ້ເຮົາຖືກຜູກມັດໄວ້ໃນກົດເກນຄືເຂົາ)
2:5 ຊຶ່ງພວກເຮົາບໍ່ໄດ້ຍອມເລີຍ ແມ່ນແຕ່ໂມງດຽວ ເພື່ອວ່າຫລັກຄວາມຈິງຂອງ
ຂ່າວປະເສີດຊິໄດ້ຄົງຢູ່ນຳພວກເຈົ້າຕໍ່ໄປ
2:6 ແຕ່ຝ່າຍພວກຜູ້ຫລັກຜູ້ໃຫຍ່ນັ້ນ ທີ່ມີຊື່ສຽງວ່າເປັນຜູ້ສຳຄັນ (ຊິເປັນອີຫຍັງກໍ
ຕາມ ຂ້ອຍກໍບໍ່ສົນເລີຍ ຍ້ອນພຣະເຈົ້າບໍ່ເຫັນແກ່ໜ້າຜູ້ໃດ) ຄືພວກນີ້ທີ່ວ່າເປັນຜູ້
ສຳຄັນນັ້ນ ພວກເຂົາບໍ່ໄດ້ເພີ່ມຄວາມເຂົ້າໃຈອີຫຍັງໃຫ້ຂ້ອຍເລີຍ
2:7 ແຕ່ກົງກັນຂ້າມ ບັດພໍພວກເຂົາເຫັນວ່າ ການປະກາດຂ່າວປະເສີດຕໍ່ຄົນຕ່າງ-
ຊາດ ຜູ້ບໍ່ຖືພິທີຕັດ ໄດ້ໂປດມອບໄວ້ກັບໂຕຂ້ອຍ ຄືກັນກັບທີ່ການປະກາດຂ່າວ
ປະເສີດຕໍ່ຄົນ ຢິວ ຜູ້ຖືພິທີຕັດ ໄດ້ໂປດມອບໄວ້ກັບ ເປໂຕ
2:8 (ຄືເພິ່ນຜູ້ທີ່ເຮັດງານໃນໂຕ ເປໂຕ ໃຫ້ເປັນທູດພິເສດຕໍ່ຄົນ ຢິວ ກໍໄດ້ເຮັດງານ
ໃນໂຕຂ້ອຍຄືກັນ ໃຫ້ເປັນທູດພິເສດຕໍ່ຄົນຕ່າງຊາດ)
2:9 ແລ້ວ ບັດພໍພວກ ຢາໂກໂບ ເກຟາ (ທີ່ອື່ນວ່າ ເປໂຕ ) ກັບ ໂຢຮັນ ທີ່ຄົນຖືວ່າ
ເປັນຜູ້ຫລັກຜູ້ໃຫຍ່ຢູ່ນັ້ນ ເຂົ້າໃຈວ່າພຣະເຈົ້າໄດ້ມອບໝາຍພຣະຄຸນໃນການປະ-
ກາດນີ້ໄວ້ໃຫ້ໂຕຂ້ອຍ ພວກເຂົາກໍເຫັນດີເຫັນຊອບນຳ ເລີຍໃຫ້ຄວາມຮ່ວມມືກັບ

ຂ້ອຍ ພ້ອມ ບາຣະນາບາ ວ່າພວກເຮົາຄວນຊິໄປຫາຄົນຕ່າງຊາດ ແລ້ວພວກ-
ເຂົາຊິໄປຫາພວກຄົນ ຢິວ ຜູ້ຖືພິທີຕັດ
2:10 ພຽງແຕ່ພວກເຂົາໄດ້ຂໍຮ້ອງ ບໍ່ໃຫ້ພວກເຮົາລືມຄົນທຸກຄົນຍາກຢູ່ທາງນັ້ນ ຊຶ່ງ
ໂຕຂ້ອຍມີໃຈວ່າຊິບໍ່ລືມເຂົາຢູ່ແລ້ວ
2:11 ແຕ່ວ່າຕອນ ເປໂຕ ມາຢັ້ງມຢູ່ເມືອງ ອັນຕິໂອເຂຍ ຂ້ອຍຈຳເປັນຕ້ອງຕໍ່ວ່າ
ລາວ ຕໍ່ໜ້າເລີຍ ຍ້ອນ ລາວ ໄດ້ເຮັດແນວບໍ່ຖືກບໍ່ແມ່ນ
2:12 ຄືວ່າ ກ່ອນທີ່ຄົນ ຢິວ ຜູ້ລາງຄົນທີ່ເປັນໝູ່ຂອງ ຢາໂກໂບ ໄດ້ມາຍາມ ເປໂຕ ກໍ
ມັກຊິຮ່ວມກິນເຂົ້າກັບພວກຄົນຕ່າງຊາດ ແຕ່ບັດພວກຢິວນັ້ນມາຮອດແລ້ວ ເປ-
ໂຕ ເລີຍຖອນໂຕແຍກອອກຈາກຄົນຕ່າງຊາດໄປ ຍ້ອນເກງໃຈເຫັນແກ່ພວກຢິວ
ທີ່ມານັ້ນ
2:13 ແລ້ວພວກຄົນ ຢິວ ຜູ້ອື່ນໆ ທີ່ຮັບເຊື່ອຢູ່ນັ້ນ ພໍເຫັນກໍເລີຍແຍກໂຕອອກເຮັດ
ເປັນຄົນໜ້າຊື່ໃຈຄົດຄືກັນ ຈົນ ບາຣະນາບາ ກໍຍັງຍອມເຮັດໄປນຳເຂົາ
2:14 ແຕ່ພໍຂ້ອຍເຫັນພວກເຂົາເຮັດແນວບໍ່ສັດຊື່ຕໍ່ຄວາມຈິງໃນເລື່ອງຂ່າວປະເສີດ
ຂ້ອຍກໍເລີຍທ້ວງ ເປໂຕ ຕໍ່ໜ້າຄູ່ຄົນຢູ່ຫັ້ນວ່າ "ຄັ່ນເຈົ້າຜູ້ເປັນຄົນ ຢິວ ຢູ່ຢ່າງຄົນ
ຕ່າງຊາດໄດ້ ເປັນຫຍັງເຈົ້າຢາກບັງຄັບພວກຄົນຕ່າງຊາດນີ້ ໃຫ້ຢູ່ຢ່າງເປັນຄົນ
ຢິວ"
2:15 ຄືພວກເຮົາທີ່ເກີດມາເປັນຊາດ ຢິວ ໂດຍທຳຊາດ ຈັ່ງຖືວ່າບໍ່ໄດ້ເປັນຄົນບາບຄື
ຄົນຕ່າງຊາດນັ້ນ
2:16 ຈັ່ງຮູ້ກັນວ່າ ບໍ່ມີໃຜຊິເປັນຄົນຊອບທຳຕໍ່ພຣະເຈົ້າໄດ້ໂດຍອາໄສການປະຕິບັດ
ຕາມກົດບັນຍັດນັ້ນ ແຕ່ດ້ວຍການເຊື່ອຫາກໍ່ໃນ ພຣະເຢຊູຄຣິດ ຊຶ່ງແມ່ນແຕ່
ພວກເຮົາກໍຍັງເຊື່ອໃນ ພຣະເຢຊູຄຣິດ ເພື່ອເປັນຄົນຊອບທຳໄດ້ໂດຍເຊື່ອຫາກໍ່
ໃນເພິ່ນ ຍ້ອນວ່າ ບໍ່ມີໃຜສາມາດເປັນຄົນຊອບທຳຕໍ່ພຣະເຈົ້າໄດ້ໂດຍການປະ-
ຕິບັດຕາມກົດບັນຍັດເລີຍ
2:17 ແຕ່ວ່າ ບັດພວກເຮົາຫວັງຫາກໍ່ຊິເປັນຄົນຊອບທຳໂດຍທາງ ພຣະເຢຊູຄຣິດ
ແລ້ວບັດເຫັນວ່າ ພວກເຮົາຍັງເປັນຄົນບາບ ຊິໝາຍຄວາມວ່າ ພຣະເຢຊູ ສະ-
ໜັບສະໜູນການເຮັດບາບບໍ້ ຂໍຕອບວ່າບໍ່ແມ່ນເລີຍ

2:18 ຄືຄັ່ນຂ້ອຍຄືນໄປກໍ່ແນວເກົ່າຂຶ້ນມາອີກ ທີ່ຂ້ອຍໄດ້ຮື້ລົງແລ້ວ ກໍສະແດງວ່າ
ຂ້ອຍກັບເປັນຜູ້ລະເມີດຄືເກົ່າ
2:19 ຄືຂ້ອຍໄດ້ຕາຍຈາກອຳນາດຂອງກົດບັນຍັດແລ້ວ ຍ້ອນຖືກປະຫານໂດຍ
ມາດຕາການຂອງກົດບັນຍັດນັ້ນ ເພື່ອຂ້ອຍຊິມີຊີວິດຢູ່ໄດ້ເພື່ອພຣະເຈົ້າ
2:20 ຄືຂ້ອຍຖືກຄຶງກັບ ພຣະຄຣິດ ແລ້ວ ຂ້ອຍຈັ່ງບໍ່ມີຊີວິດຢູ່ຕໍ່ໄປ ແຕ່ເປັນຊີວິດ
ຂອງ ພຣະເຢຊູຄຣິດ ຢູ່ໃນໂຕຂ້ອຍຕ່າງຫາກ ຈັ່ງຊັ້ນຊີວິດທີ່ຂ້ອຍມີຢູ່ນີ້ ຂ້ອຍມີ
ໂດຍການເຊື່ອຫາກໍ່ໃນ ພຣະບຸດ ຂອງພຣະເຈົ້າ ຜູ້ເພິ່ນໄດ້ຮັກແພງໂຕຂ້ອຍ ກັບ
ໄດ້ສະລະເພິ່ນເອງເພື່ອໂຕຂ້ອຍ
2:21 ຂ້ອຍຈັ່ງບໍ່ເນລະຄຸນພຣະຄຸນຂອງພຣະເຈົ້າເລີຍ ຍ້ອນວ່າ ຄັ່ນການເປັນຄົນ
ຊອບທຳຕໍ່ພຣະເຈົ້າໄດ້ໂດຍທາງກົດບັນຍັດນັ້ນ ກໍສະແດງວ່າ ພຣະເຢຊູຄຣິດ
ຕາຍໂດຍບໍ່ປະໂຫຍດຊື່ໆ

## ຄາລາເຕຍ ບົດທີ 3

3:1 ໂອ້ ພວກ ຄາລາເຕຍ ເອີຍ ຄືໂງ່ແທ້ ແມ່ນໃຜມາສະກົດຈິດບໍ່ໃຫ້ເຊື່ອຟັງ
ຄວາມຈິງ ຊຶ່ງວ່າພາບການປະຫານຂອງ ພຣະເຢຊູ ນັ້ນ ໄດ້ວາດໄວ້ຕໍ່ໜ້າພວກ
ເຈົ້າແລ້ວ
3:2 ຂ້ອຍຂໍຖາມພວກເຈົ້າແນວໜຶ່ງ ຄື ພວກເຈົ້າໄດ້ຮັບ ພຣະວິນຍານ ໂດຍທາງ
ປະຕິບັດຕາມກົດບັນຍັດ ຫລືວ່າດ້ວຍການເຊື່ອຟັງຂ່າວປະເສີດ
3:3 ພວກເຈົ້າໂງ່ຄືນັ້ນບໍ້ ວ່າພວກເຈົ້າໄດ້ເລີ່ມຊີວິດໃໝ່ໂດຍໃນ ພຣະວິນຍານ
ແລ້ວບັດນີ້ພວກເຈົ້າຊິເຂົ້າສູ່ຄວາມສົມບູນໂດຍການປະຕິບັດບໍ້
3:4 ພວກເຈົ້າໄດ້ທົນຄວາມລຳບາກຫລາຍແນວມາແລ້ວ ບັດນີ້ຊິໃຫ້ມັນບໍ່ປະ-
ໂຫຍດຢູ່ບໍ້
3:5 ຈັ່ງຊັ້ນ ສ່ວນຜູ້ທີ່ໂຜດໃຫ້ພວກເຈົ້າຮັບ ພຣະວິນຍານ ກັບໄດ້ໂຜດໃຫ້ມີເຫດ-
ການອັດສະຈັນເກີດຕໍ່ໜ້າພວກເຈົ້າ ເພິ່ນໄດ້ໂຜດໃຫ້ຍ້ອນການປະຕິບັດຕາມ
ທາງເນື້ອໜັງຫລືຍ້ອນການເຊື່ອຟັງຂ່າວປະເສີດ
3:6 ຄືກັນກັບທີ່ເຖົ້າ ອັບຣາຮາມ ໄດ້ເຊື່ອພຣະເຈົ້າ ແລ້ວຄວາມເຊື່ອຂອງ ລາວ ນັ້ນ
ພຣະເຈົ້າຈັ່ງຖືວ່າ ມັນເຮັດໃຫ້ ລາວ ເປັນຜູ້ຊອບທຳ

3:7 ຈັ່ງຊັ້ນ ໃຫ້ເຂົ້າໃຈກັນວ່າ ຜູ້ທີ່ມີຄວາມເຊື່ອຄືກັນກັບເຖົ້າ ອັບຣາຮາມ ເທົ່ານັ້ນ
ໄດ້ເປັນລູກຫລານຂອງ ລາວ
3:8 ແລ້ວ ພຣະຄໍາ ໂດຍເຫັນໄວ້ລ່ວງໜ້າກ່ອນວ່າ ພຣະເຈົ້າເພິ່ນຊິໃຫ້ຄົນຕ່າງ-
ຊາດເປັນຄົນຊອບທໍາຕໍ່ເພິ່ນໄດ້ໂດຍຄວາມເຊື່ອ ເພິ່ນຈັ່ງປະກາດຂ່າວປະເສີດ
ໄວ້ກັບເຖົ້າ ອັບຣາຮາມ ລ່ວງໜ້າກ່ອນວ່າ "ຊົນຊາດທັງຫລາຍຊິໄດ້ພົບເປັນສຸກ
ໂດຍທາງເຈົ້າເດີ້"
3:9 ຈັ່ງຊັ້ນ ມີແຕ່ຜູ້ທີ່ມີຄວາມເຊື່ອ ຈັ່ງໄດ້ພົບເປັນສຸກ ຄືກັນກັບເຖົ້າ ອັບຣາຮາມ ນັ້ນ
3:10 ຄືຜູ້ທີ່ອາໄສການປະຕິບັດຕາມກົດບັນຍັດ ກໍຢູ່ພາຍໃຕ້ການສາບແຊ່ງ ຕາມທີ່
ມີຂຽນໄວ້ວ່າ "ສ່ວນຜູ້ທີ່ບໍ່ໄດ້ປະຕິບັດຕາມໝົດຄູ່ຂໍ້ຢູ່ສະເໝີທີ່ມີໄວ້ໃນກົດບັນຍັດ
ຜູ້ນັ້ນໄດ້ຕົກຢູ່ໃຕ້ການສາບແຊ່ງແລ້ວ"
3:11 ແຕ່ມັນຊັດເຈນແລ້ວວ່າ ບໍ່ມີໃຜສາມາດເປັນຄົນຊອບທໍາໃນສາຍຕາຂອງ
ພຣະເຈົ້າໄດ້ໂດຍທາງກົດບັນຍັດ ໂດຍວ່າຜູ້ຊອບທໍາມີຊີວິດຢູ່ໄດ້ດ້ວຍທາງ
ຄວາມເຊື່ອ
3:12 ກັບວ່າ ເລື່ອງກົດບັນຍັດນັ້ນບໍ່ໄດ້ອາໄສຄວາມເຊື່ອ ແຕ່ "ສ່ວນຜູ້ທີ່ອາໄສການ
ປະຕິບັດຕາມກົດບັນຍັດກໍຕ້ອງມີຊີວິດຢູ່ໄດ້ດ້ວຍຄູ່ຂໍ້ນັ້ນ"
3:13 ແຕ່ ພຣະຄຣິດ ໄດ້ໄຖ່ພວກເຮົາອອກຈາກການຖືກສາບແຊ່ງຂອງຂໍ້ກົດບັນຍັດ
ແລ້ວ ຄືເພິ່ນຖືກການສາບແຊ່ງແທນພວກເຮົາ ຕາມທີ່ມີຄໍາຂຽນໄວ້ວ່າ "ຜູ້ທີ່ຖືກ
ຄຶງເທິງໄມ້ກາງແຂນໄດ້ຖືກສາບແຊ່ງລົງໂທດແລ້ວ"
3:14 ເພື່ອວ່າ ຄໍາອວຍພອນທີ່ໃຫ້ໄວ້ກັບເຖົ້າ ອັບຣາຮາມ ນັ້ນ ຊິໄດ້ເຂົ້າເຖິງພວກ
ຄົນຕ່າງຊາດນໍາ ໃນ ພຣະເຢຊູຄຣິດ ເພື່ອພວກເຮົາຊິໄດ້ຮັບ ພຣະວິນຍານ ຊຶ່ງ
ເປັນຜູ້ທີ່ສັນຍາໄວ້ນັ້ນ ດ້ວຍທາງຄວາມເຊື່ອ
3:15 ພີ່ນ້ອງ ເອີຍ ຂ້ອຍຂໍເວົ້າເລື່ອງຄໍາໝັ້ນສັນຍາຂອງມະນຸດ ຄືຕາມຫລັກແລ້ວ
ແມ່ນແຕ່ມັນເປັນຄໍາໝັ້ນສັນຍາລະຫວ່າງຄົນຊື່ໆ ບັດຢືນຢັນກັນແລ້ວ ບໍ່ມີໃຜມີ
ສິດຍົກເລີກໃຫ້ເປັນໂມຄະ ຫລືເພີ່ມຂໍ້ອີຫຍັງອີກໄດ້ເລີຍ

3:16 ບັດນີ້ ຝ່າຍຄຳໝັ້ນສັນຍາທີ່ພຣະເຈົ້າໂຜດໃຫ້ໄວ້ກັບ ອັບຣາຮາມ ເພິ່ນບໍ່ໄດ້
ວ່າ "ກັບເຊື້ອສາຍທັງຫລາຍ" ຄືຫລາຍຄົນ ແຕ່ໄດ້ວ່າ "ເຊື້ອສາຍຄົນດຽວ" ແລ້ວ
ຜູ້ນັ້ນຄື ພຣະຄຣິດ
3:17 ແລ້ວຄຳໝັ້ນສັນຍາຂອງພຣະເຈົ້າທີ່ຂ້ອຍເວົ້ານີ້ ເພິ່ນໄດ້ສັນຍາໄວ້ 430 ປີ
ກ່ອນຊິຕັ້ງກົດບັນຍັດ ຈັ່ງຊັ້ນ ກົດບັນຍັດນັ້ນຈັ່ງບໍ່ມີສິດທີ່ຍົກເລີກຄຳໝັ້ນສັນຍາທີ່
ພຣະເຈົ້າໂປດຢືນຢັນໄວ້ແລ້ວໂດຍທາງ ພຣະເຢຊູຄຣິດ ໃຫ້ເປັນໂມຄະໄດ້ເລີຍ
3:18 ຈັ່ງຊັ້ນ ຄັ່ນກຳມະສິດໃນມໍລະດົກຂຶ້ນຢູ່ກັບເລື່ອງກົດບັນຍັດ ມັນກໍບໍ່ໄດ້ຂຶ້ນກັບ
ຄຳໝັ້ນສັນຍາຕໍ່ໄປອີກ ແຕ່ວ່າ ພຣະເຈົ້າໄດ້ມອບມໍລະດົກນັ້ນໄວ້ໃຫ້ ອັບຣາຮາມ
ຕາມຄຳໝັ້ນສັນຍາແລ້ວ
3:19 ຄັ່ນບໍ່ຊັ້ນ ການຕັ້ງກົດບັນຍັດໄວ້ນັ້ນກໍມີປະໂຫຍດອີຫຍັງຊັ່ນ ມັນຖືກເພິ່ນໄວ້
ຜ່ານທາງເທວະທູດໂດຍມືຂອງຄົນກາງຍ້ອນການລ່ວງລະເມີດ *ຂອງຄົນ* ຈົນ
ກວ່າ "ເຊື້ອສາຍຄົນດຽວ" ນັ້ນໄດ້ມາ ທີ່ຄຳໝັ້ນສັນຍາເວົ້າເຖິງ
3:20 ບັດນີ້ ສ່ວນຄົນກາງບໍ່ໄດ້ເຈລະຈາໃຫ້ຝ່າຍດຽວ ແຕ່ວ່າສ່ວນພຣະເຈົ້າ ເພິ່ນກໍ
ເປັນໜຶ່ງ
3:21 ຈັ່ງຊັ້ນ ກົດບັນຍັດຂັດຂວາງຄຳໝັ້ນສັນຍາຂອງພຣະເຈົ້າຢູ່ບໍ້ ມັນເປັນໄປບໍ່ໄດ້
ດອກ ຍ້ອນວ່າຄັ່ນແມ່ນມີຂໍ້ກົດບັນຍັດສາມາດໃຫ້ຊີວິດ *ອັນຕະຫລອດໄປເປັນນິດ*
ໄດ້ ການເປັນຄົນຊອບທຳຕໍ່ພຣະເຈົ້າໄດ້ກໍຊິມາທາງກົດບັນຍັດ
3:22 ແຕ່ ພຣະຄຳ ສະຫລຸບໄວ້ວ່າ ຄົນທັງປວງຖືກກັກຂັງໄວ້ຢູ່ໃຕ້ອຳນາດບາບ
ແລ້ວ ເພື່ອວ່າຄຳໝັ້ນສັນຍາເລື່ອງຄວາມເຊື່ອໃນ ພຣະເຢຊູຄຣິດ ກໍຊິມອບໄວ້ໃຫ້
ຜູ້ທີ່ເຊື່ອ
3:23 ແຕ່ວ່າ ກ່ອນເລື່ອງຄວາມເຊື່ອນັ້ນໄດ້ມາເຖິງ ພວກເຮົາກໍຢູ່ໃຕ້ການເບິ່ງແຍງ
ຮັກສາຂອງກົດບັນຍັດ ຈົນກວ່າເລື່ອງຄວາມເຊື່ອໄດ້ຮັບການເປີດເຜີຍ
3:24 ຈັ່ງຊັ້ນ ກົດບັນຍັດປຽບຄືນາຍຄູ ມີໜ້າທີ່ນຳມາຫາ ພຣະຄຣິດ ເພື່ອເປັນຄົນ
ຊອບທຳໄດ້ໂດຍທາງຄວາມເຊື່ອ
3:25 ແຕ່ບັດເລື່ອງຄວາມເຊື່ອໄດ້ມາເຖິງແລ້ວ ພວກເຮົາບໍ່ໄດ້ຢູ່ໃຕ້ນາຍຄູນັ້ນອີກ
ຕໍ່ໄປ

3:26 ຍ້ອນວ່າ ພວກເຈົ້າໄດ້ເປັນລູກໆ ຂອງພຣະເຈົ້າ ໂດຍທາງຄວາມເຊື່ອຫາກໍ່ໃນ
ພຣະເຢຊູຄຣິດ ໝົດຄູ່ຄົນແລ້ວ
3:27 ຄືຜູ້ໃດໃນພວກເຈົ້າທີ່ຮັບ *ເຊື່ອ* ເຂົ້າມີສ່ວນຮ່ວມໃນ ພຣະເຢຊູຄຣິດ ຜູ້ນັ້ນໄດ້
ສວມ ພຣະຄຣິດ ແລ້ວ
3:28 ຈັ່ງຊັ້ນ ບໍ່ມີການຖືວ່າເປັນຊາດ ຢິວ ຊາດນັ້ນຊາດນີ້ ເປັນຂ້າທາດເປັນ ໄທ
ເປັນຍິງເປັນຜູ້ຊາຍອີກຕໍ່ໄປ ແຕ່ໄດ້ມາຮ່ວມເປັນອັນໜຶ່ງອັນດຽວກັນໃນ ພຣະເຢ-
ຊູຄຣິດ ໝົດແລ້ວ
3:29 ຄື ຄັນເຈົ້າເປັນຄົນຂອງ ພຣະຄຣິດ ເຈົ້າກໍເປັນຄົນໃນເຊື້ອສາຍຂອງເຖົ້າ ອັບ-
ຣາຮາມ ແລ້ວ ມີກຳມະສິດຮ່ວມກັນໃນມໍລະດົກຕາມຄຳໝັ້ນສັນຍານັ້ນ

## ຄາລາເຕຍ ບົດທີ 4

4:1 ຂ້ອຍເວົ້າອີກວ່າ ຕາມຫລັກແລ້ວ ຜູ້ທີ່ມີກຳມະສິດໃນມໍລະດົກ ໃນຕອນທີ່ຍັງ
ເປັນເດັກນ້ອຍຢູ່ ເຂົາກໍບໍ່ແຕກຕ່າງກັບຄົນໃຊ້ ເຖິງແມ່ນວ່າເຂົາ ອາດ ຊິເປັນເຈົ້າ
ຂອງໝົດທັງມວນກໍໄດ້
4:2 ແຕ່ເຂົາກໍຍັງຢູ່ໃຕ້ພວກຜູ້ປົກຄອງ ກັບພວກຜູ້ເບິ່ງແຍງ ຈົນກວ່າຊິຄົບອາຍຸທີ່ພໍ່
ຂອງເຂົາໄດ້ກຳນົດໄວ້
4:3 ພວກເຮົາກໍຄືກັນ ໃນຕອນທີ່ເຮົາຍັງເປັນເດັກນ້ອຍ *ທີ່ບໍ່ທັນຮູ້ຈັກທົບ* ຕອນນັ້ນ
ພວກເຮົາຄືຂ້າທາດ ຢູ່ໃຕ້ການບົບບັງຄັບຂອງລະບົບຕ່າງໆ ທາງໂລກນີ້
4:4 ແຕ່ພໍຄົບກຳນົດມາແລ້ວ ພຣະເຈົ້າໄດ້ໃຊ້ ພຣະບຸດ ຂອງເພິ່ນລົງມາ ເກີດທາງ
ແມ່ຍິງ ເກີດເປັນຄົນ ຢິວ ຢູ່ພາຍໃຕ້ກົດບັນຍັດນັ້ນ
4:5 ເພື່ອມາໄຖ່ມາກອບກູ້ຄົນ ຢິວ ຜູ້ຢູ່ໃຕ້ກົດບັນຍັດ ເພື່ອພວກເຮົາຊິຮັບຖານະວ່າ
ມີສິດເປັນລູກຂອງພຣະເຈົ້າ
4:6 ແລ້ວຍ້ອນວ່າພວກເຈົ້າໄດ້ເປັນລູກໆ ພຣະເຈົ້າໄດ້ສົ່ງ ພຣະວິນຍານ ຂອງ
ພຣະບຸດ ລົງມາຢູ່ໃນຊີວິດຈິດໃຈຂອງພວກເຈົ້າແລ້ວ ເອີ້ນພຣະເຈົ້າວ່າ “ອີພໍ່ໆ”
4:7 ຈັ່ງຊັ້ນ ພວກເຈົ້າບໍ່ແມ່ນຂ້າທາດຕໍ່ໄປອີກ ແຕ່ບັດນີ້ໄດ້ເປັນລູກ ຄັນເປັນລູກ
ແລ້ວ ກໍໄດ້ເປັນຜູ້ມີກຳມະສິດໃນມໍລະດົກຂອງພຣະເຈົ້າທາງ ພຣະຄຣິດ ແລ້ວ

4:8 ແຕ່ຈັ່ງໃດກໍຕາມ ໃນຕອນທີ່ພວກເຈົ້າຍັງບໍ່ທັນຮູ້ຈັກພຣະເຈົ້າ ພວກເຈົ້າກໍມີແຕ່
ປະຕິບັດນຳພະນຳເຈົ້າຕ່າງໆທາງໂລກນີ້ ຊຶ່ງຕາມຈິງແລ້ວມັນບໍ່ແມ່ນພະອີຫລີ
ດອກ
4:9 ແຕ່ວ່າ ບັດພວກເຈົ້າຮູ້ຈັກພຣະເຈົ້າແລ້ວ ຫລືຕາມຫລັກ ພຣະເຈົ້າໄດ້ຮູ້ຈັກກັບ
ເຈົ້າ ເປັນອີຫຍັງພວກເຈົ້າກໍຍັງຫັນກັບໄປຊອກເປັນຂ້າທາດອີກຄືເກົ່າ ຕາມລະ-
ບຽບການຕ່າງໆ ທາງໂລກນີ້ ແນວທີ່ອ່ອນໄຫວ ຈົນປັນຍາ ຊ່ອຍອີຫຍັງເຈົ້າບໍ່ໄດ້
ເລີຍ
4:10 ຄືພວກເຈົ້າຖືມື້ ຖືເວັນ ຖືເດືອນ ຖືປີ
4:11 ຂ້ອຍເປັນຫ່ວງພວກເຈົ້າ ຢ້ານວ່າທີ່ຂ້ອຍໄດ້ມາຫຸ້ມເທໃນການງານເພື່ອພວກ
ເຈົ້ານັ້ນ ເປັນການບໍ່ປະໂຫຍດຊື່ໆ
4:12 ພີ່ນ້ອງເອີຍ ຂ້ອຍຂໍຮ້ອງນຳພວກເຈົ້າ ໃຫ້ຢູ່ຢ່າງຂ້ອຍນີ້ເດີ້ ທີ່ວ່າຂ້ອຍໄດ້ມາຢູ່
ຢ່າງຄົນຕ່າງຊາດຄືພວກເຈົ້າ ພວກເຈົ້າບໍ່ໄດ້ເຮັດອີຫຍັງໃຫ້ຂ້ອຍເຈັບໃຈດອກ
4:13 ພວກເຈົ້າຮູ້ຢູ່ວ່າ ຕອນແຮກນັ້ນ ແມ່ນແຕ່ຂ້ອຍບໍ່ສະບາຍ ຂ້ອຍກໍຍັງມາປະ-
ກາດຂ່າວປະເສີດໃຫ້ພວກເຈົ້າ
4:14 ແລ້ວ ພວກເຈົ້າໄດ້ຫົນເອົາຕໍ່ໂຕຂ້ອຍ ແມ່ນແຕ່ພະຍາດຂອງຂ້ອຍນັ້ນ ພວກ
ເຈົ້າບໍ່ໄດ້ລັງກຽດຫລືປະຕິເສດໂຕຂ້ອຍ ແຕ່ຕ້ອນຮັບຢ່າງດີຄືຂ້ອຍເປັນເທວະທູດ
ຂອງພຣະເຈົ້າ ຫລືດີບໍ່ດີ ຄືເປັນ ພຣະເຢຊູຄຣິດ ເອງ
4:15 ແລ້ວວ່າ ການທີ່ພວກເຈົ້າເຄີຍຮັບປາກວ່າ ໄດ້ພົບເປັນສຸກຫລາຍ ຂ້ອຍກໍຍັງ
ຢືນຢັນໄດ້ວ່າ ຕອນຂ້ອຍມາຫານັ້ນ ພວກເຈົ້າໄດ້ວ່າ ຄັ່ນເປັນໄດ້ ພ້ອມທີ່ຊິຄວັກ
ຕາໂຕເອງອອກມາສະລະໃຫ້ຂ້ອຍ ໂລດ
4:16 ບັດນີ້ ໂຕຂ້ອຍກາຍເປັນສັດຕູຢູ່ບໍ້ ຍ້ອນຂ້ອຍໄດ້ບອກຄວາມຈິງໃຫ້ພວກເຈົ້າ
4:17 ຄືພວກຈອມປອມນັ້ນ ເຂົາມີໃຈຮ້ອນຮົນນຳພວກເຈົ້າ ແຕ່ວ່າເພື່ອແນວບໍ່ດີ ຄື
ເຂົາກີດກັ້ນພວກເຈົ້າໄວ້ ກໍເພື່ອພວກເຈົ້າຊິກັບມີໃຈຮ້ອນຮົນນຳພວກເຂົາ ຕາມ
ຜົນປະໂຫຍດຂອງເຂົາເອງ
4:18 ຄືມັນເປັນການດີທີ່ຊິມີໃຈຮ້ອນຮົນຕໍ່ແນວດີຢູ່ສະເໝີ ບໍ່ວ່າຂ້ອຍຊິຢູ່ນຳຫລືບໍ່

4:19 ໂອ້ ລູກນ້ອຍ ເອີຍ ຂ້ອຍຢາກນຳພວກເຈົ້າອີກແລ້ວ ຄືຂ້ອຍຮູ້ສຶກປັ່ນປ່ວນໃຈ
ຫລາຍຄືແມ່ຍິງເຈັບທ້ອງຊິອອກລູກ ຈົນກວ່າພາບລັກຂອງ ພຣະເຢຊູຄຣິດ ໄດ້ກໍ່
ຂຶ້ນເຖິງຂັ້ນສົມບູນໃນພວກເຈົ້າແລ້ວ
4:20 ຄືໃຈຂ້ອຍປາດຖະໜາຢາກມາຢູ່ນຳພວກເຈົ້າຢູ່ດຽວນີ້ ຢາກມາເວົ້າແບບ
ອ່ອນນ້ອມແໜ່ ຍ້ອນຂ້ອຍມີຄວາມສົງໄສນຳພວກເຈົ້າ
4:21 ບອກຂ້ອຍແໜ່ ພວກເຈົ້າຜູ້ທີ່ຄຶດຢາກຢູ່ໃຕ້ກົດບັນຍັດ ພວກເຈົ້າຄືບໍ່ໄດ້ຍິນບໍ້
ວ່າ ກົດບັນຍັດວ່າຈັ່ງໃດ
4:22 ຄືມີ ພຣະຄຳ ຂຽນໄວ້ວ່າ ເຖົ້າ ອັບຣາຮາມ ມີລູກຊາຍສອງຄົນ ຜູ້ໜຶ່ງຊື່ ອິດຊະ-
ມາເອນ ເກີດນຳນາງ ຮາກາ ຜູ້ເປັນຄົນໃຊ້ ແລ້ວອີກຜູ້ໜຶ່ງຊື່ ອີຊາກ ເກີດນຳນາງ
ຊາຣາ ຜູ້ເປັນ ໄທ
4:23 ແລ້ວລູກຜູ້ທີ່ເກີດນຳຍິງຜູ້ເປັນຄົນໃຊ້ ໄດ້ເກີດມາຕາມທຳມະດາໂລກ ແຕ່ລູກ
ຜູ້ທີ່ເກີດນຳຍິງຜູ້ເປັນ ໄທ ໄດ້ເກີດມາຕາມຄຳໝັ້ນສັນຍານັ້ນ
4:24 ຊຶ່ງໄດ້ເປັນພາບພົດເວົ້າເຖິງພັນທະສັນຍາສອງຢ່າງ ຢ່າງໜຶ່ງ *ເປັນຕາມກົດ-
ບັນຍັດ* ຈາກພູເຂົາ ຊີນາຍ ຊຶ່ງເຂົາເກີດມາເປັນຂ້າທາດ ໝາຍເຖິງນາງ ຮາກາ
4:25 ຄືນາງ ຮາກາ ນີ້ ໄດ້ແກ່ພູເຂົາ ຊີນາຍ ຢູ່ເຂດ ອາຣາເບຍ ເລັງເຖິງເມືອງ ເຢຣູ-
ຊາເລັມ ຊຶ່ງຄູ່ມື້ນີ້ກໍຢູ່ໃຕ້ການເປັນຂ້າທາດພ້ອມກັບພົນລະເມືອງຂອງມັນ
4:26 ແຕ່ວ່າຍັງມີເມືອງ ເຢຣູຊາເລັມ ອີກເມືອງໜຶ່ງຢູ່ເທິງສະຫວັນ ແລ້ວພົນລະ-
ເມືອງນັ້ນກໍມີແຕ່ເສລີພາບ ນີ້ເນາະ ເປັນຄືແມ່ແທ້ຂອງພວກເຮົາ *ຜູ້ຢູ່ໃນ ພຣະ-
ຄຣິດ*
4:27 ຕາມທີ່ມີຄຳທຳນາຍຂຽນໄວ້ ວ່າ “ໃຫ້ຊົມຊື່ນຍິນດີໄວ້ ນາງຜູ້ເປັນໝັນບໍ່ມີລູກ
ເອີຍ ຜູ້ບໍ່ເຄີຍເຈັບທ້ອງອອກລູກມາກ່ອນ ກໍໃຫ້ໂຫ່ຮ້ອງດີໃຈໄດ້ແລ້ວ ຄືນາງຜູ້ຢູ່
ໂດດດ່ຽວມີລູກຫລາຍກວ່ານາງຜູ້ມີຜົວ”
4:28 ບັດນີ້ ພີ່ນ້ອງເອີຍ ພວກເຮົາເປັນລູກໆຕາມຄຳໝັ້ນສັນຍາ ຄືກັນກັບ ອີຊາກ
ນັ້ນ

4:29 ແຕ່ ອ້າຍຜູ້ທີ່ເກີດມາຕາມເນື້ອໜັງນັ້ນ ໄດ້ບຽດບຽນຂົ່ມເຫງນ້ອງ ຜູ້ທີ່ເກີດມາ
ໂດຍອຳນາດຂອງ ພຣະວິນຍານ ແລ້ວການບຽດບຽນຂົ່ມເຫງນັ້ນກໍຍັງມີຮອດຄູ່
ມື້ນີ້
4:30 ຈັ່ງໃດກໍຕາມ ພຣະຄຳ ຂຽນໄວ້ວ່າຈັ່ງໃດ “ໃຫ້ໄລ່ນາງຜູ້ເປັນຂ້າທາດນັ້ນໃຫ້
ໜີໄປພ້ອມທັງລູກຂອງເຂົາ” ຍ້ອນວ່າລູກຂອງຍິງຜູ້ເປັນຂ້າທາດບໍ່ມີກຳມະສິດໃນ
ມໍລະດົກຮ່ວມກັບລູກຂອງຍິງຜູ້ເປັນ ໄທ ເລີຍ
4:31 ຈັ່ງຊັ່ນ ພີ່ນ້ອງເອີຍ ພວກເຮົາບໍ່ແມ່ນລູກໆ ຂອງນາງຜູ້ເປັນຂ້າທາດນັ້ນ ແຕ່-
ວ່າເປັນລູກໆ ຂອງນາງຜູ້ເປັນ ໄທ

## ຄາລາເຕຍ ບົດທີ 5

5:1 ຈັ່ງຊັ່ນ ໃຫ້ຢືນໝັ້ນໃນເສລີພາບຊຶ່ງ ພຣະຄຣິດ ໄດ້ປົດປ່ອຍພວກເຮົາໃຫ້ເປັນ
ໄທ ໄດ້ແລ້ວ ແລ້ວຢ່າໄປຫຍຸ້ງກ່ຽວກັບແອກຂອງການເປັນຂ້າທາດນັ້ນອີກເລີຍ
5:2 ຄືຂ້ອຍ ໂປໂລ ນີ້ວ່າ ຄັນພວກເຈົ້າຍອມເຂົ້າພິທີຕັດ *ນຳເຂົາ* ພຣະເຢຊູຄຣິດ ກໍ
ເປັນປະໂຫຍດຕໍ່ພວກເຈົ້າບໍ່ໄດ້
5:3 ຂ້ອຍຂໍຢືນຢັນອີກວ່າ ຜູ້ຊາຍຄູ່ຄົນທີ່ເຂົ້າພິທີຕັດ ເຂົາເປັນລູກໜີ້ຂອງກົດບັນ-
ຍັດແລ້ວ ຈັ່ງຕ້ອງປະຕິບັດຮັກສາໝົດຄູ່ຂໍ້ເລີຍ
5:4 ແລ້ວເຈົ້າຜູ້ທີ່ພະຍາຍາມເປັນຄົນຊອບທຳໂດຍເຮັດນຳລະບົບກົດບັນຍັດນັ້ນ
ພຣະຄຣິດ ໝົດຄວາມໝາຍສຳລັບພວກເຈົ້າແລ້ວ ຍ້ອນເຈົ້າໄດ້ຫລຸດຈາກລະບົບ
ພຣະຄຸນແລ້ວ
5:5 ແຕ່ວ່າພວກເຮົາຜູ້ທີ່ຄອຍຖ້າຢ່າງຕື່ນເຕັ້ນ ມີຄວາມຫວັງອັນໝັ້ນຄົງໂດຍ ພຣະ-
ວິນຍານ ວ່າຊິເປັນຄົນຊອບທຳໄດ້ໂດຍຄວາມເຊື່ອ
5:6 ຍ້ອນວ່າ ໃນ ພຣະເຢຊູຄຣິດ ນັ້ນ ການເຂົ້າພິທີຕັດ ຫລືບໍ່ໄດ້ເຂົ້າພິທີຕັດ ບໍ່ມີ
ອຳນາດເຮັດຫຍັງ ມີແຕ່ຄວາມເຊື່ອເທົ່ານັ້ນທີ່ມີອຳນາດໂດຍທາງຄວາມຮັກ *ຂອງ*
*ພຣະເຈົ້າ*
5:7 ພວກເຈົ້າໄດ້ແລ່ນອອກໂຕດີມາກ່ອນ ແຕ່ບັດນີ້ແມ່ນໃຜມາກໍ່ກວນກີດກັ້ນ
ພວກເຈົ້າໄວ້ ບໍ່ໃຫ້ເຊື່ອຟັງຄວາມຈິງ

5:8 ຄືການຊັກຊວນນີ້ ບໍ່ໄດ້ມາຈາກພຣະເຈົ້າເລີຍ ຜູ້ເພິ່ນທີ່ໄດ້ເອີ້ນໄດ້ເຊີນພວກ
ເຈົ້າມານັ້ນ
5:9 *ຕາມ ສຸພາສິດ ວ່າ* "ເຊື້ອຟູໜ້ອຍນຶ່ງສາມາດເຮັດໃຫ້ເຂົ້າຈີ່ພອງຂຶ້ນໄດ້ໝົດ
ກ້ອນ"
5:10 ແຕ່ຂ້ອຍໝັ້ນໃຈນຳພວກເຈົ້າໃນພຣະເຈົ້າ ວ່າພວກເຈົ້າຊິເປັນນ້ຳໜຶ່ງໃຈດຽວ
ກັນ ແຕ່ວ່າຜູ້ທີ່ກໍ່ກວນພວກເຈົ້ານັ້ນ ເຂົາຊິເປັນໃຜກໍຢ່າ ກໍຊິຖືກການຕັດສິນລົງ-
ໂທດ
5:11 ພີ່ນ້ອງເອີຍ ຄັ່ນຂ້ອຍຍັງບອກສອນການເຂົ້າພິທີຕັດ *ຄືເຂົາ* ເປັນຫຍັງຂ້ອຍ
ຍັງຖືກຂົ່ມເຫງ ຄັ່ນບໍ່ຊັ້ນ ເລື່ອງໄມ້ກາງແຂນຊິບໍ່ໄດ້ເປັນອຸປະສັກໃຫ້ສະດຸດອີກ
ຕໍ່ໄປ
5:12 ຝ່າຍພວກຈອມປອມທີ່ມາກໍ່ກວນພວກເຈົ້ານັ້ນ ຂ້ອຍຄຶດຢາກໃຫ້ເຂົາຕັດ
ຂອງໂຕເອງອອກໄປເລີຍ
5:13 ພີ່ນ້ອງເອີຍ ພຣະເຈົ້າໄດ້ເອີ້ນພວກເຈົ້າມາສູ່ເສລີພາບແລ້ວ ຈັ່ງຊັ່ນຢ່າໃຊ້ເສ-
ລີພາບນັ້ນເປັນຊ່ອງທາງເພື່ອປ່ອຍຊີວິດໄປຕາມເນື້ອໜັງ ແຕ່ວ່າໃຫ້ໃຊ້ຊີວິດຮັບ-
ໃຊ້ຊ່ອຍກັນແລະກັນ ດ້ວຍຄວາມຮັກເດີ້
5:14 ຍ້ອນວ່າກົດບັນຍັດທັງໝົດນັ້ນ ສະຫລຸບໄດ້ໃນຖ້ອຍຄຳດຽວ ຄື "ໃຫ້ຮັກ
ເພື່ອນບ້ານຄືກັນກັບຮັກໂຕເອງ"
5:15 ແຕ່ຄັ່ນພວກເຈົ້າຊອກກັດກິນກັນແລະກັນ ໃຫ້ລະວັງໄວ້ເດີ້ ມິແຕ່ຊິທຳລາຍ
ກັນແລະກັນ
5:16 ຂ້ອຍວ່າ ໃຫ້ດຳເນີນຊີວິດໃນ ພຣະວິນຍານ ແລ້ວເຈົ້າຊິບໍ່ໄດ້ເຮັດຕາມກິເລດ
ຕັນຫາທາງເນື້ອໜັງໃຫ້ສຳເລັດ
5:17 ຄືກິເລດຕັນຫາຝ່າຍເນື້ອໜັງກໍຕໍ່ຕ້ານການຊີ້ງນຳຂອງ ພຣະວິນຍານ ແລ້ວ
ການຊີ້ງນຳຂອງ ພຣະວິນຍານ ກໍຕໍ່ຕ້ານຝ່າຍເນື້ອໜັງ ຄືສອງທາງນີ້ຂັດກັນແລະ
ກັນ ພວກເຈົ້າຈັ່ງບໍ່ສາມາດເຮັດແນວທີ່ປາດຖະໜາຢາກເຮັດ
5:18 ແຕ່ຄັ່ນພວກເຈົ້າຢູ່ໃນການຊີ້ງນຳຂອງ ພຣະວິນຍານ ພວກເຈົ້າກໍຊິບໍ່ໄດ້ຢູ່ໃຕ້
ລະບົບກົດບັນຍັດເລີຍ

5:19 ແຕ່ການງານຝ່າຍເນື້ອໜັງກໍເຫັນຊັດເຈນ ຄື ການຫລິ້ນຊູ້ຜົວເມຍກັນ ການ
ລ່ວງປະເວນີຜູ້ຊາຍຍິງ ການເຮັດຊົ່ວຊ້າເລວຊາມ ການເຮັດລາມົກບ້າກາມ
5:20 ການນົບໄຫວ້ຮູບເຄົາລົບ ການເຮັດເວດມົນຄາຖາ ການຄຽດຊັງຖືໂທດກັນ
ການທະເລາະວິວາດໂຕ້ຖຽງກັນ ການອິດສາຕາຮ້ອນກັນ ການໂມໂຫໂທໂສ
ການອອກໜ້າແຂ່ງດີກັນ ການແຕກແຍກກັນ ການຫລິ້ນພັກຫລິ້ນພວກ ການຖືຄຳ
ສອນຜິດ
5:21 ການຂີ້ໂລບ ການຂ້າຟັນລັນແທງກັນ ການກິນເຫລົ້າເມົາຢາ ການກິນລ້ຽງ-
ແບບຊົ່ວຊ້າກັນ ກັບແນວອື່ນໆ ໃນທຳນອງດຽວກັນ ທີ່ຂ້ອຍເຄີຍບອກມາແລ້ວ ຜູ້
ທີ່ປະຕິບັດຊີວິດຢູ່ແບບນີ້ບໍ່ມີສິດມີສ່ວນຮັບມໍລະດົກໃນລາຊະອານາຈັກຂອງ-
ພຣະເຈົ້າໄດ້ເລີຍ
5:22 ແຕ່ວ່າຜົນຂອງ ພຣະວິນຍານ ກໍຄື ຄວາມຮັກ ຄວາມຊົມຊື່ນຍິນດີ ຄວາມສະ-
ຫງົບສຸກ ການເຮັດໃຈໄວ້ໂດນ ຄວາມປານີ ຄວາມດີງາມ ຄວາມຈົງຮັກພັກດີ
5:23 ຄວາມສຸພາບອ່ອນນ້ອມ ການຄວບຄຸມຕົວເອງ ແນວໝູ່ນີ້ ມັນກໍບໍ່ມີກົດບັນຍັດ
ຂໍ້ໃດທີ່ກົດກັ້ນຫ້າມໄວ້ເລີຍ
5:24 ແລ້ວຜູ້ທີ່ເປັນຄົນຂອງ ພຣະຄຣິດ ໄດ້ປະຫານຊີວິດເກົ່າຝ່າຍເນື້ອໜັງແລ້ວ
ພ້ອມທັງກິເລດຕັນຫາຂອງມັນ
5:25 ຄື ຄັນພວກເຮົາໄດ້ຊີວິດທາງ ພຣະວິນຍານ ຂໍໃຫ້ພວກເຮົາດຳເນີນຊີວິດ
ໂດຍໃນ ພຣະວິນຍານ
5:26 ແລ້ວຂໍຢ່າໃຫ້ພວກເຮົາຊອກຫາກຽດອັນບໍ່ເປັນສາລະມາອວດໂຕ ຍົວະແຫຍ່
ກັນ ຫລືອິດສາກັນເລີຍ

## ຄາລາເຕຍ ບົດທີ 6

6:1 ພີ່ນ້ອງເອີຍ ຄັນມີຜູ້ໃດພ່າຍແພ້ຕໍ່ຄວາມຜິດ ກໍໃຫ້ຜູ້ທີ່ພວມໃຊ້ຊີວິດໃນການນຳ
ພາຂອງ ພຣະວິນຍານ ຊ່ອຍຜູ້ນັ້ນໃຫ້ຄືນມາຕັ້ງໂຕໃໝ່ ແຕ່ໃຫ້ເຮັດນຳເຂົາໂດຍ
ມີໃຈອ່ອນນ້ອມເດີ້ ໂດຍຄຶດເຫັນໂຕເອງນຳ ວ່າໃຜກໍສາມາດຫລົງຜິດໄດ້ຄືກັນ
6:2 ໃຫ້ຊ່ອຍແບ່ງເບົາພາລະກັນແລະກັນ ກັບເຫັນອົກເຫັນໃຈກັນເດີ້ ຊຶ່ງເປັນການ
ປະຕິບັດຕາມຫລັກເກນຂອງ ພຣະຄຣິດ ໃຫ້ສຳເລັດ

6:3 ຄື ຄັນຜູ້ໃດຖືໂຕວ່າສຳຄັນດີເດັ່ນ ບັດເຂົາບໍ່ມີອີຫຍັງດີເດັ່ນ ເຂົາກໍຫລອກໂຕ
ເອງຊື່ໆ
6:4 ແຕ່ໃຫ້ຄູ່ຄົນພິຈາລະນາເບິ່ງຜົນໃນຊີວິດຂອງໂຕເອງດີກວ່າ ແລ້ວເຂົາຈັ່ງມີ
ແນວຂອງໂຕເອງທີ່ຍົກຍ້ອງໄດ້ ບໍ່ແມ່ນໃນໂຕຜູ້ອື່ນ
6:5 ຄືຄູ່ຄົນຄວນຊິຮັບຜິດຊອບໃນພາລະຂອງໂຕເອງ
6:6 ແລ້ວສ່ວນຜູ້ທີ່ໄດ້ຮັບການຝຶກສອນໃນ ພຣະຄຳ ກໍໃຫ້ມີນ້ຳໃຈ ແບ່ງປັນແນວດີ
ຄູ່ແນວ ຊຶ່ງເປັນການຕອບແທນຜູ້ທີ່ຝຶກສອນເຂົາ
6:7 ຢ່າຄຶດຜິດເດີ້ ເຈົ້າຫລອກພຣະເຈົ້າບໍ່ໄດ້ເລີຍ ຍ້ອນວ່າຜູ້ໃດຫວ່ານອີຫຍັງລົງ
ໄປ ກໍຊິເກັບກ່ຽວຜົນແນວນັ້ນ
6:8 ຄື ສ່ວນຜູ້ໃດຫວ່ານໄວ້ໃນທາງເນື້ອໜັງ ກໍຊິໄດ້ຄວາມເປື່ອຍເນົ່າເປັນຜົນຮັບ
ແຕ່ສ່ວນຜູ້ທີ່ຫວ່ານໄວ້ໃນທາງ ພຣະວິນຍານ ກໍຊິໄດ້ຊີວິດອັນຕະຫລອດໄປ-
ເປັນນິດຈາກ ພຣະວິນຍານ ເປັນຜົນຮັບ
6:9 ແລ້ວຢ່າໃຫ້ພວກເຮົາເກີດເມື່ອຍລ້າໃນການເຮັດດີ ຍ້ອນວ່າພໍຮອດຍາມແລ້ວ
ກໍຊິໄດ້ຮັບຜົນຕອບແທນ ຄັນເຮົາບໍ່ໄດ້ທໍ້ແທ້ໃຈກ່ອນ
6:10 ຈັ່ງຊັ່ນ ບັດພວກເຮົາມີໂອກາດ ກໍໃຫ້ເຮັດດີຕໍ່ຄູ່ຄົນ ໂດຍສະເພາະຕໍ່ພີ່ນ້ອງຜູ້
ເຊື່ອໃນເຮືອນຂອງພຣະເຈົ້າ
6:11 ພວກເຈົ້າໄດ້ສັງເກດບໍ້ ໂຕໜັງສືໃຫຍ່ທີ່ຂ້ອຍໄດ້ລົງມືຂຽນເອງເຖິງພວກເຈົ້າ
6:12 ແລ້ວສຳລັບພວກຈອມປອມນັ້ນ ເຂົາຊັກຊວນໃຫ້ພວກເຈົ້າເຂົ້າພິທີຕັດນຳ
ເພື່ອເປັນການອອກໜ້າໃຫ້ຄົນເຫັນດີນຳເຂົາ ຢ້ານວ່າຊິຖືກໝູ່ໂຈມຕີຕໍ່ວ່າ ຍ້ອນ
ເລື່ອງໄມ້ກາງແຂນຂອງ ພຣະຄຣິດ
6:13 ຄື ແມ່ນແຕ່ພວກເຂົາທີ່ເຂົ້າພິທີຕັດນັ້ນ ສາມາດຮັກສາກົດບັນຍັດໄດ້ ແຕ່ເຂົາ
ຢາກໃຫ້ພວກເຈົ້າເຂົ້າພິທີຕັດນຳເຂົາ ເພື່ອເຂົາຊິໄດ້ມີແນວອວດທາງເນື້ອໜັງຊື່ໆ
6:14 ແຕ່ຢ່າໃຫ້ມັນເປັນໄປເດັດຂາດເດີ້ ທີ່ວ່າຂ້ອຍຊິຊອກອວດອ້າງອີຫຍັງ ນອກ
ຈາກຊິອວດໃນໄມ້ກາງແຂນຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາເທົ່ານັ້ນ ທີ່
ເປັນເຫດທີ່ຂ້ອຍຖືກປະຫານຕໍ່ໂລກ ກັບໂລກຖືກປະຫານຕໍ່ຂ້ອຍນຳ

6:15 ຍ້ອນວ່າໃນ ພຣະເຢຊູຄຣິດ ນັ້ນ ການເຂົ້າພິທີຕັດ ທັງການບໍ່ເຂົ້າພິທີຕັດ ບໍ່ມີ
ຄວາມໝາຍອີຫຍັງເລີຍ ແຕ່ການຖືກສ້າງຂຶ້ນມາເປັນຄົນໃໝ່ເທົ່ານັ້ນ *ທີ່ມີຄວາມ-
ໝາຍ*
6:16 ຂໍໃຫ້ສັນຕິພາບກັບຄວາມເມດຕາຂອງພຣະເຈົ້າ ມີຢູ່ກັບຜູ້ທີ່ດຳເນີນຊີວິດ
ຕາມຫລັກຄວາມຈິງນີ້ ແລ້ວຢູ່ກັບພີ່ນ້ອງຄົນ ອິສະຣາເອນ ຂອງພຣະເຈົ້ານັ້ນນຳ
6:17 ແລ້ວແຕ່ນີ້ໄປ ຂໍຢ່າໃຫ້ຜູ້ໃດ ມາລົບກວນຂ້ອຍຕໍ່ໄປອີກເດີ້ ຍ້ອນວ່າໃນໂຕ
ຂ້ອຍນີ້ ມີສັນຍະລັກຂອງອົງພຣະເຢຊູຄຣິດເຈົ້າ
6:18 ພີ່ນ້ອງ ເອີຍ ສຸດທ້າຍນີ້ ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງເຮົາ ສະ-
ຖິດຢູ່ນຳຈິດວິນຍານຂອງພວກເຈົ້າ ອາເມນ

*[ຂຽນເຖິງພີ່ນ້ອງຊາວ ຄາລາເຕຍ ຈາກເມືອງ ໂຣມ]*

# ເອເຟໂຊ

## ເອເຟໂຊ ບົດທີ 1

1:1 ຈາກ ໂປໂລ ທູດພິເສດຂອງ ພຣະເຢຊູຄຣິດ ຕາມພຣະປະສົງຂອງພຣະເຈົ້າ
ຮຽນເຖິງພີ່ນ້ອງຄົນຂອງພຣະເຈົ້າຢູ່ເມືອງ ເອເຟໂຊ ກັບພີ່ນ້ອງຜູ້ຈົ່ງຮັກພັກດີຕໍ່
ພຣະເຢຊູຄຣິດ ນຳ
1:2 ຂໍໃຫ້ຢູ່ໃນຮົ່ມພຣະກະລຸນາທິຄຸນ ມີຄວາມສະຫງົບສຸກຈາກພຣະເຈົ້າຜູ້ເປັນພໍ່
ກັບຈາກອົງພຣະເຢຊູຄຣິດເຈົ້າ ຄຸ້ມຄອງຮັກສາພວກເຈົ້າໄວ້ເດີ້
1:3 ສາທຸການພຣະເຈົ້າ ພໍ່ຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຄືເປັນ
ພຣະພອນຫລາຍທີ່ເພິ່ນໄດ້ມອບສົມບັດຂອງສະຫວັນໄວ້ໃຫ້ເຮົາຄົບໝົດໃນ
ພຣະເຢຊູຄຣິດ ເປັນສົມບັດກ່ຽວກັບຊີວິດຝ່າຍວິນຍານ
1:4 ເປັນຕາມແຜນງານທີ່ເພິ່ນໄດ້ວາງໄວ້ແຕ່ຍັງບໍ່ທັນໄດ້ສ້າງໂລກ ວ່າເຮົາ *ຜູ້ຢູ່ໃນ
ພຣະຄຣິດ* ຊິໄດ້ເປັນຄົນບໍລິສຸດໄວ້ສະເພາະເພິ່ນ ໂດຍຄວາມຮັກຂອງເພິ່ນ
1:5 ຄືເພິ່ນໄດ້ວາງໄວ້ແຕ່ກ່ອນແລ້ວວ່າ ເພິ່ນຊິຮັບເຮົາໄວ້ເປັນລູກລ້ຽງ ຂອງເພິ່ນ
ໃນ ພຣະເຢຊູຄຣິດ ໂດຍຕາມພຣະປະສົງອັນດີງາມຂອງເພິ່ນ

1:6 ຄືເປັນຕາຍົກຍ້ອງພຣະກະລຸນາທິຄຸນຂອງເພິ່ນອັນປະກອບດ້ວຍສະຫງ່າລາສີ
ຊຶ່ງເປັນແນວທາງທີ່ເພິ່ນຍິນດີຮັບເອົາພວກເຮົາໄວ້ໃນ ພຣະເຢຊູຄຣິດ ລູກຮັກ-
ແພງຂອງເພິ່ນ
1:7 ຄືໃນ ພຣະເຢຊູຄຣິດ ນັ້ນ ພວກເຮົາໄດ້ຮັບການໄຖ່ໂດຍພຣະໂລຫິດຂອງເພິ່ນ
*ເປັນຄ່າໄຖ່* ແລ້ວໄດ້ຍົກໂທດຄວາມຜິດບາບຂອງເຮົາໃຫ້ໝົດໄປ ເປັນຍ້ອນ
ພຣະກະລຸນາທິຄຸນຂອງພຣະເຈົ້າທີ່ເພິ່ນມີຢ່າງເຫລືອລົ້ນ
1:8 ທີ່ເພິ່ນຍິນດີຫຸ້ມເທມາໃຫ້ເຮົາຢ່າງເຫລືອລົ້ນ ໂດຍປັນຍາກັບຄວາມອ້ອມຮູ້
ຂອງເພິ່ນອັນບໍ່ມີຈຳກັດ
1:9 ແລ້ວເພິ່ນຍິນດີເປີດເຜີຍແຜນງານອັນລ້ຳເລີກຂອງເພິ່ນໃຫ້ພວກເຮົາຮູ້ຈັກ
ເປັນຕາມນ້ຳໃຈອັນດີງາມຕາມທີ່ເພິ່ນຕັ້ງໃຈໃນໂຕເພິ່ນເອງ
1:10 ຄືບັດຮອດຍາມຄົບກຳນົດໄວ້ແລ້ວ ເພິ່ນຊິເອົາໝົດຄູ່ອັນຄູ່ແນວມາໂຮມກັນ
ໄວ້ໃນ ພຣະຄຣິດ ຄືຄູ່ແນວຢູ່ເທິງສະຫວັນ ພ້ອມທັງແນວຢູ່ໃນໂລກນຳ ໃຫ້ຢູ່-
ໃນເພິ່ນ
1:11 ແລ້ວໃນ ພຣະເຢຊູ ນີ້ ພວກເຮົາໄດ້ຮັບກຳມະສິດໃນມໍລະດົກແລ້ວ ຕາມ
ແຜນງານຂອງພຣະເຈົ້າ ທີ່ເພິ່ນໄດ້ຕັ້ງໄວ້ຕາມຄວາມຕັ້ງໃຈຂອງເພິ່ນ ຊຶ່ງເພິ່ນ
ສາມາດເຮັດໃຫ້ໝົດຄູ່ແນວເປັນໄປຕາມພຣະປະສົງອັນດີງາມຂອງເພິ່ນໄດ້
1:12 ເພື່ອເຮົາຜູ້ທີ່ວາງໃຈໃນ ພຣະຄຣິດ ແລ້ວ ຊິໄດ້ເປັນທີ່ຍົກຍ້ອງສັນລະເສີນ
ພຣະເຈົ້າ
1:13 ແລ້ວພວກເຈົ້າໄດ້ເຊື່ອວາງໃຈໃນເພິ່ນຄືກັນ ຫລັງຈາກໄດ້ຍິນຖ້ອຍຄຳແຫ່ງ
ຄວາມຈິງ ຄືຂ່າວປະເສີດນັ້ນທີ່ນຳໄປສູ່ຄວາມລອດພົ້ນ ຊຶ່ງພໍເຊື່ອແລ້ວ ພຣະ-
ວິນຍານ ທີ່ເພິ່ນໄດ້ສັນຍາໄວ້ນັ້ນ ໄດ້ເຂົ້າມາຢູ່ ປະທັບຕາໄວ້ ຮັບຮອງວ່າເປັນກຳ-
ມະສິດຂອງພຣະເຈົ້າແລ້ວ
1:14 ຊຶ່ງ ພຣະວິນຍານ ນີ້ເປັນແນວມັດຈຳຮັບຮອງກຳມະສິດໄວ້ ຈົນກວ່າມື້ນັ້ນທີ່
ພຣະເຈົ້າຊິລົງມາຮັບເອົາພວກເຮົາ ຜູ້ທີ່ເພິ່ນໄຖ່ໄວ້ ຊຶ່ງນີ້ກໍເປັນທີ່ຍົກຍ້ອງສັນ-
ລະເສີນສະຫງ່າລາສີຂອງເພິ່ນ

1:15 ຈັ່ງຊັ້ນ ຕອນຂ້ອຍໄດ້ຍິນຂ່າວວ່າພວກເຈົ້າມີຄວາມເຊື່ອໃນອົງ ພຣະເຢຊູເຈົ້າ
ແລ້ວ ກັບຄວາມຮັກແພງຂອງພວກເຈົ້າຕໍ່ພີ່ນ້ອງຄົນຂອງພຣະເຈົ້າຄູ່ຄົນນໍາ
1:16 ຂ້ອຍຈັ່ງຂອບໃຈໄຫວ້ວອນພຣະເຈົ້າເພື່ອພວກເຈົ້າຢູ່ສະເໝີຢ່າງບໍ່ຢູ່ບໍ່ເຊົາ
1:17 ວ່າຂໍໃຫ້ພຣະເຈົ້າ ຜູ້ເປັນພໍ່ຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຄືຜູ້ທີ່
ປະກອບດ້ວຍສະຫງ່າລາສີ ໂຜດໃຫ້ຈິດວິນຍານຂອງພວກເຈົ້າມີປັນຍາຢ່າງ-
ແຈ່ມແຈ້ງເພື່ອຊິໄດ້ຮູ້ຈັກເພິ່ນໃຫ້ດີ
1:18 ໂດຍວ່າ ຕາໃຈຂອງພວກເຈົ້າໄດ້ຮັບການເປີດໄວ້ແລ້ວ ເພື່ອຊິໄດ້ເຂົ້າໃຈດີ
ໃນຄວາມຫວັງອັນໝັ້ນຄົງທີ່ເພິ່ນໄດ້ເອີ້ນໄດ້ເຊີນມານັ້ນ ກັບວ່າສົມບັດທີ່ພຣະ-
ເຈົ້າມີໄວ້ໃຫ້ເປັນມໍລະດົກຕໍ່ຄົນຂອງເພິ່ນ ວ່າມີສະຫງ່າລາສີອັນຮຸ່ງເຮືອງລໍ້າເລີດ
ຮາວໃດ
1:19 ກັບວ່າ ລິດທານຸພາບຂອງພຣະເຈົ້າຕໍ່ພວກເຮົາຜູ້ທີ່ເຊື່ອນັ້ນ ວ່າມັນຍິ່ງໃຫຍ່
ມະຫາສານສໍ່າໃດ
1:20 ຊຶ່ງເປັນລິດທານຸພາບ ທີ່ເພິ່ນໃຊ້ຕອນໂຜດໃຫ້ ພຣະເຢຊູ ເປັນຂຶ້ນມາຈາກ
ຕາຍ ຂຶ້ນໄປນັ່ງເທິງບັນລັງທາງຂວາຂອງເພິ່ນ *ຢູ່ສະຫວັນ*
1:21 ແຮງສູງກວ່າພວກເທບເໜືອຊັ້ນ ເໜືອສັກເທບ ເໜືອເທບຜູ້ມີອິດທິລິດ ເໜືອ
ເທບຜູ້ຄອບຄອງອານາຈັກ ກັບເໜືອນາມຂອງສິ່ງສັກສິດທັງປວງທີ່ເຂົາເອີ້ນຫາ
ບໍ່ວ່າແຕ່ໃນຍຸກນີ້ເທົ່ານັ້ນ ແຕ່ໃນຍຸກທີ່ຊິມານັ້ນນໍາ
1:22 ກັບພຣະເຈົ້າຈັ່ງໂຜດໃຫ້ໝົດຄູ່ອັນຄູ່ແນວ ຖືກມອບໄວ້ຢູ່ໃຕ້ອໍານາດເດັດຂາດ
ຂອງ ພຣະເຢຊູ ກັບກະລຸນາຕັ້ງເພິ່ນໄວ້ໃຫ້ເປັນປະລະບຽງເປັນຫົວໜ້າເໜືອກຸ່ມ
ຜູ້ເຊື່ອໃນໝົດຄູ່ແນວ
1:23 ຊຶ່ງກຸ່ມຜູ້ເຊື່ອປຽບເປັນຮ່າງເປັນພຣະກາຍຂອງເພິ່ນ ເຕັມໄປດ້ວຍສະຫງ່າ-
ລາສີຂອງເພິ່ນ ຊຶ່ງໝົດຄູ່ອັນຄູ່ແນວຢູ່ທົ່ວສາກົນໂລກເຕັມລົ້ນດ້ວຍພຣະບາລະມີ
ອັນມະຫາສານຂອງເພິ່ນ

## ເອເຟໂຊ ບົດທີ 2

2:1 ແລ້ວຝ່າຍພວກເຈົ້າ ເພິ່ນໂຜດໃຫ້ມີຊີວິດ ແມ່ນແຕ່ພວກເຈົ້າຢູ່ໃນສະພາບຕາຍ
ໄປແລ້ວຍ້ອນການລ່ວງລະເມີດໃນຄວາມຜິດບາບນັ້ນ

2:2 ຄືແຕ່ກ່ອນ ພວກເຈົ້າເຄີຍໃຊ້ຊີວິດຕາມລະບົບຄ່ານິຍົມຂອງໂລກນີ້ ຕົກຢູ່ໃຕ້
ອໍານາດຂອງ ພະຍາມານ ຜູ້ຄອບຄອງເທິງຟ້າອາກາດ ແລ້ວຄູ່ມື້ນີ້ມັນເປັນວິນ-
ຍານນັ້ນທີ່ຍັງບັງຄັບບັນຊາໃນໃຈຂອງຄົນທີ່ບໍ່ຍອມເຊື່ອຟັງ
2:3 ແຕ່ກ່ອນ ພວກເຮົາກໍເຄີຍໃຊ້ຊີວິດແຕ່ໃນທາງກິເລດຕັນຫາຂອງເນື້ອໜັງຕາມ
ໃຈມັກ ຄືດຢາກເຮັດຫຍັງກໍເຮັດໄປ ໂລດ ຕົກຢູ່ໃນສະພາບສົມຄວນຊິຖືກພຣະ-
ເຈົ້າລົງໂທດຄືກັນກັບຄົນອື່ນ
2:4 ແຕ່ພຣະເຈົ້າ ຜູ້ທີ່ເຕັມໄປດ້ວຍຄວາມເມດຕາ ແລ້ວຍ້ອນຄວາມຮັກແພງທີ່
ເພິ່ນມີຕໍ່ພວກເຮົາ
2:5 ເຖິງແມ່ນວ່າພວກເຮົາຍັງຢູ່ໃນສະພາບຕາຍແລ້ວໃນບາບຂອງໂຕເອງກໍຕາມ
ເພິ່ນໂຜດໃຫ້ມີຊີວິດຂຶ້ນມາໃໝ່ຮ່ວມກັບ ພຣະເຢຊູຄຣິດ (ຄືທີ່ພວກເຮົາລອດພົ້ນ
ໄດ້ນັ້ນ ກໍຍ້ອນພຣະກະລຸນາທິຄຸນ)
2:6 ແລ້ວຈັ່ງໂຜດໃຫ້ພວກເຮົາຂຶ້ນນັ່ງນໍາກັນຢູ່ເທິງສະຫວັນກັບ ພຣະເຢຊູຄຣິດ
2:7 ເພື່ອໃນຍຸກຕໍ່ໆ ມາ ພຣະເຈົ້າຊິໄດ້ສະແດງພຣະກະລຸນາທິຄຸນອັນມະຫາສານ
ຂອງເພິ່ນ ພ້ອມກັບຄວາມເມດຕາຂອງເພິ່ນ ໃຫ້ກັບພວກເຮົາໂດຍໃນ ພຣະເຢຊູ-
ຄຣິດ
2:8 ຄື ທີ່ພວກເຈົ້າລອດພົ້ນ *ບາບ* ໄດ້ນັ້ນກໍຍ້ອນພຣະກະລຸນາທິຄຸນຂອງພຣະເຈົ້າ
ໂດຍຄວາມເຊື່ອ ມັນບໍ່ໄດ້ຂຶ້ນຢູ່ກັບໂຕເຈົ້າເອງ ແຕ່ໄດ້ເປັນຂອງຂວັນມາຈາກ
ພຣະເຈົ້າ
2:9 ແລ້ວບໍ່ໄດ້ຂຶ້ນຢູ່ກັບການປະຕິບັດ ເພື່ອບໍ່ມີໃຜສາມາດອວດອ້າງໄດ້
2:10 ຄືພວກເຮົາກໍເປັນຝີມືຂອງເພິ່ນ ທີ່ເພິ່ນໄດ້ສ້າງໃຫ້ເຮົາມີຊີວິດຂຶ້ນມາໃໝ່ໃນ
ພຣະເຢຊູຄຣິດ ເພື່ອປະກອບການດີ ຕາມແຜນການທີ່ພຣະເຈົ້າໄດ້ວາງໄວ້ມາ
ກ່ອນ ກໍເພື່ອໃຫ້ເຮົາດໍາເນີນຊີວິດຕາມນັ້ນ
2:11 ຈັ່ງຊັ້ນ ໃຫ້ຈື່ໄວ້ວ່າ ພວກເຈົ້າເຄີຍເປັນຄົນຕ່າງຊາດມາກ່ອນຝ່າຍເນື້ອໜັງ
ເປັນຄໍາດູຖູກຂອງພວກຄົນທີ່ເຂົ້າພິທີຕັດທີ່ເຮັດດ້ວຍມືນັ້ນ ວ່າພວກເຈົ້າບໍ່ໄດ້ເຂົ້າ
ພິທີຕັດ *ຄືເຂົາ*

2:12 ແລ້ວໃນຕອນນັ້ນ ພວກເຈົ້າຢູ່ນອກ ພຣະຄຣິດ ບໍ່ມີສິດໃນການເປັນພົນລະ-
ເມືອງ ອິສະຣາເອນ ເປັນຄົນນອກພັນທະສັນຍາຕ່າງໆ ທີ່ພຣະເຈົ້າໄດ້ສັນຍາໄວ້
ບໍ່ມີຄວາມຫວັງ ກັບຢູ່ໃນໂລກນີ້ໂດຍບໍ່ມີພຣະເຈົ້າເລີຍ
2:13 ແຕ່ບັດນີ້ ພວກເຈົ້າໄດ້ເຂົ້າມາເຖິງແລ້ວໃນ ພຣະເຢຊູຄຣິດ ຊຶ່ງແຕ່ກ່ອນ
ພວກເຈົ້າຢູ່ຫ່າງໄກ ແຕ່ທັນທີໄດ້ມາໃກ້ຊິດແລ້ວ ໂດຍພຣະໂລຫິດຂອງພຣະເຢ-
ຊູຄຣິດ
2:14 ຄືເພິ່ນເອງເປັນແຫລ່ງສັນຕິພາບຂອງພວກເຮົາ ເຫດໃຫ້ພວກເຮົາທັງສອງ
ຝ່າຍ ເຂົ້າມາເປັນອັນໜຶ່ງອັນດຽວກັນ ແລ້ວຈັ່ງມ້າງກຳແພງແນວທີ່ກີດກັ້ນໄວ້ນັ້ນ
ໃຫ້ພັງລົງແລ້ວ
2:15 ຄືເພິ່ນໄດ້ຈັດການລະບົບເກົ່າທາງຂໍ້ປະຕິບັດໃນກົດບັນຍັດ ແນວທີ່ເຮັດໃຫ້-
ເປັນສັດຕູກັນໃຫ້ໝົດໄປ ໂດຍໃນຮ່າງກາຍຂອງເພິ່ນເອງ ເພື່ອຊິໄດ້ສ້າງບຸກຄົນ
ຜູ້ໃໝ່ຜູ້ໜຶ່ງໃນໂຕເພິ່ນ ອອກຈາກສອງຟາກສອງຝ່າຍນັ້ນ ມາເປັນຄົນດຽວກັນ
ຈັ່ງໃຫ້ມີສັນຕິພາບຊຶ່ງກັນແລະກັນ
2:16 ແລ້ວເພື່ອເພິ່ນຊິໄດ້ໃຫ້ທັງສອງຝ່າຍນັ້ນຄືນດີກັນກັບພຣະເຈົ້າ ເປັນກຸ່ມດຽວ
ກັນໄດ້ໂດຍທາງໄມ້ກາງແຂນນັ້ນ ຈັ່ງໄດ້ປະຫານການເປັນສັດຕູກັນໃຫ້ໝົດແລ້ວ
2:17 ແລ້ວເພິ່ນໄດ້ມາປະກາດສັນຕິພາບໃຫ້ພວກເຈົ້າ ຜູ້ຢູ່ຫ່າງໄກ ພ້ອມທັງຊາດ
ຢິວ ຜູ້ຢູ່ໃກ້
2:18 ຄື ໂດຍທາງເພິ່ນເອງ ເຮົາທັງສອງຝ່າຍຈັ່ງມີທາງເຂົ້າເຖິງ ພຣະວິນຍານ ກັບ
ເຖິງພຣະເຈົ້າຜູ້ເປັນພໍ່ນຳ
2:19 ຈັ່ງຊັ້ນ ແຕ່ນີ້ໄປພວກເຈົ້າບໍ່ແມ່ນຄົນຕ່າງດ້າວທ້າວຕ່າງແດນອີກແລ້ວ ແຕ່
ໄດ້ເປັນພີ່ນ້ອງຊາດດຽວກັນ ເປັນຄົນຂອງພຣະເຈົ້ານຳກັນ ເປັນໄທເຮືອນດຽວ
ກັນຢູ່ໃນຄອບຄົວຂອງພຣະເຈົ້າແລ້ວ
2:20 ຄືຖືກສ້າງຂຶ້ນມາໂດຍພວກທູດພິເສດ ກັບພວກຜູ້ເປັນປາກເປັນສຽງ *ຂອງ
ພຣະເຈົ້າ* ຊຶ່ງເປັນຮາກຖານ *ອັນໝັ້ນຄົງ* ແລ້ວ ພຣະເຢຊູຄຣິດ ເອງເປັນກ້ອນ-
ຫີນເອກທີ່ຫົວມຸມ

2:21 ຄືໃນ ພຣະເຢຊູ ນີ້ ພວກເຈົ້າກໍປຽບຄືເຮືອນທີ່ພວມຖືກປະກອບກັນຂຶ້ນ ເປັນ
ວິຫານອັນບໍລິສຸດໃນອົງພຣະຜູ້ເປັນເຈົ້າ
2:22 ຄືຖືກກໍ່ກັນຂຶ້ນເປັນໜ້ອງສະຖິດຢູ່ຂອງພຣະເຈົ້າໂດຍທາງ ພຣະວິນຍານ

## ເອເຟໂຊ ບົດທີ 3

3:1 ຍ້ອນເຫດນີ້ເນາະ ຂ້ອຍ ໂປໂລ ນີ້ເປັນນັກໂທດຖືກຈອງຈຳໃນຄຸກ ຍ້ອນເຫັນ
ແກ່ ພຣະເຢຊູຄຣິດ ກໍເພື່ອພວກເຈົ້າທີ່ເປັນຄົນຕ່າງຊາດ
3:2 ຄືຄັ່ນພວກເຈົ້າເຄີຍໄດ້ຍິນເຖິງພັນທະກິດໃນການຮັບໃຊ້ພຣະເຈົ້າ ທີ່ເພິ່ນໄດ້
ມອບໝາຍໄວ້ຕໍ່ຂ້ອຍໃຫ້ພວກເຈົ້າ ຕາມພຣະກະລຸນາທິຄຸນຂອງເພິ່ນ
3:3 ຕາມທີ່ພຣະເຈົ້າເຄີຍເປີດເຜີຍໂດຍທາງນິມິດໝາຍໃຫ້ຂ້ອຍເຂົ້າໃຈດີໃນແຜນ
ງານອັນລ້ຳເລີກຂອງເພິ່ນ (ຊຶ່ງຂ້ອຍເຄີຍໄດ້ຂຽນມາຫຍໍ້ໆແໜ່ແລ້ວ
3:4 ຊຶ່ງອ່ານແລ້ວ ພວກເຈົ້າຄືຊິເຂົ້າໃຈເຖິງຄວາມອ້ອມຮູ້ຂອງຂ້ອຍໃນແຜນງານ
ລ້ຳເລີກເລື່ອງ ພຣະເຢຊູຄຣິດ )
3:5 ຊຶ່ງຕັ້ງແຕ່ກ່ອນມາ ພຣະເຈົ້າບໍ່ເຄີຍເປີດເຜີຍເລື່ອງນີ້ໃຫ້ຜູ້ໃດໃນມວນມະນຸດ
ແຕ່ບັດນີ້ເພິ່ນໄດ້ເປີດເຜີຍໃຫ້ພວກຜູ້ເປັນປາກເປັນສຽງກັບທູດພິເສດຂອງເພິ່ນ
ໂດຍທາງ ພຣະວິນຍານ
3:6 ເພື່ອພວກຕ່າງຊາດຊິໄດ້ມີກຳມະສິດຮ່ວມໃນມໍລະດົກ ພ້ອມກັບມີສ່ວນຮ່ວມ
ໃນຄຳໝັ້ນສັນຍາຂອງພຣະເຈົ້ານຳກັນ ໂດຍໃນ ພຣະເຢຊູຄຣິດ ຕາມເລື່ອງຂ່າວ
ປະເສີດນັ້ນ
3:7 ຊຶ່ງຂ້ອຍໄດ້ຮັບພັນທະກິດຮັບໃຊ້ຕາມທີ່ພຣະເຈົ້າໄດ້ໂຜດໃຫ້ໂດຍພຣະກະລຸ-
ນາທິຄຸນຂອງເພິ່ນ ທີ່ເພິ່ນເຮັດໃນໂຕຂ້ອຍໂດຍລິດອຳນາດຂອງເພິ່ນ
3:8 ແລ້ວເພິ່ນໄດ້ໂຜດໃຫ້ຂ້ອຍຕາມພຣະກະລຸນາທິຄຸນຂອງເພິ່ນ ຊຶ່ງໂຕຂ້ອຍນີ້
ເປັນຜູ້ນ້ອຍໆກວ່າໝູ່ໃນພວກຄົນຂອງພຣະເຈົ້າ ໃຫ້ຂ້ອຍນຳເລື່ອງ ພຣະເຢຊູ-
ຄຣິດ ອັນເປັນສົມບັດເລີດລ້ຳຄ່າ ໄປປະກາດໃຫ້ພວກຄົນຕ່າງຊາດ
3:9 ເພື່ອໃຫ້ໝົດຄູ່ຄົນໄດ້ຮູ້ໄດ້ເຫັນເຖິງແຜນການອັນລ້ຳເລີກຂອງພຣະເຈົ້າທີ່ເພິ່ນ
ຊິໃຫ້ຮ່ວມສາມັກຄີກັນເປັນຈັ່ງໃດ ຊຶ່ງເພິ່ນໄດ້ເຊື່ອງໄວ້ຕັ້ງແຕ່ສ້າງໂລກມາ ແລ້ວ
ເພິ່ນໄດ້ສ້າງໝົດຄູ່ແນວນັ້ນໂດຍທາງ ພຣະເຢຊູຄຣິດ

3:10 ໂດຍພຣະເຈົ້າໄດ້ມຸ້ງໄວ້ວ່າ ບັດນີ້ ພຣະປັນຍາລໍ້າເລີດຂອງເພິ່ນຊິໄດ້ປາກົດ
ໃຫ້ພວກເທວວິນຍານເຫັນ ຜູ້ທີ່ມີອໍານາດຄອບຄອງຢູ່ແດນຟ້ານັ້ນ ຜ່ານທາງກຸ່ມ
ຜູ້ເຊື່ອ
3:11 ຕາມພຣະປະສົງອັນອັນຕະຫລອດໄປເປັນນິດທີ່ເພິ່ນເຮັດໃຫ້ສໍາເລັດໃນອົງ
ພຣະເຢຊູຄຣິດເຈົ້າຂອງພວກເຮົາ
3:12 ຊຶ່ງໃນ ພຣະເຢຊູຄຣິດ ນີ້ ພວກເຮົາມີສິດເຂົ້າມາໄດ້ໂດຍຄວາມໝັ້ນໃຈອັນກ້າ
ໂດຍຄວາມເຊື່ອໃນເພິ່ນ
3:13 ຈັ່ງຊັ້ນ ຂ້ອຍຂໍ ບໍ່ໃຫ້ພວກເຈົ້າໝົດກໍາລັງໃຈຍ້ອນຄວາມລໍາບາກທີ່ຂ້ອຍຕ້ອງ
ທົນເອົາແບບນີ້ເພື່ອພວກເຈົ້າ ຊຶ່ງເປັນກຽດໃຫ້ພວກເຈົ້າ
3:14 ຍ້ອນເຫດນີ້ເອງ ຂ້ອຍຈັ່ງຄຸກເຂົ່າລົງຕໍ່ພຣະເຈົ້າ ພໍ່ຂອງອົງພຣະເຢຊູຄຣິດ-
ເຈົ້າຂອງພວກເຮົາ
3:15 ຊຶ່ງໂດຍຜູ້ນັ້ນ ກຸ່ມພີ່ນ້ອງທັງໝົດໄດ້ຊື່ຂອງເພິ່ນ ບໍ່ວ່າຊິຢູ່ໃນໂລກກໍດີ ຫລືຢູ່
ສະຫວັນກໍຢ່າ
3:16 *ແລ້ວຂໍ* ໃຫ້ເພິ່ນໂຜດໃຫ້ພວກເຈົ້າມີຄວາມແຂງແຮງ ມີກໍາລັງເພີ່ມຂຶ້ນ ພາຍ-
ໃນຈິດໃຈຂອງພວກເຈົ້າໂດຍທາງ ພຣະວິນຍານ ຂອງເພິ່ນ ຕາມສົມບັດອັນຮຸ່ງ-
ເຮືອງຂອງເພິ່ນທີ່ມີຢ່າງເຫລືອລົ້ນ
3:17 ເພື່ອ ພຣະຄຣິດ ຊຶ່ງຢູ່ໃນໃຈຂອງພວກເຈົ້າທາງຄວາມເຊື່ອ ທີ່ວ່າພວກເຈົ້າ ມີ
ຮາກຖານອັນໝັ້ນຄົງໃນຄວາມຮັກແລ້ວ
3:18 ຊິສາມາດເຂົ້າໃຈ ພ້ອມກັບຄົນຂອງພຣະເຈົ້າຜູ້ອື່ນໆ ເຖິງຄວາມກວ້າງ
ຄວາມຍາວ ຄວາມເລິກ ກັບຄວາມສູງ
3:19 ແລ້ວຈັ່ງຮູ້ຈັກເຖິງຄວາມຮັກຂອງ ພຣະເຢຊູຄຣິດ ຊຶ່ງເກີນກວ່າທີ່ຊິຮັບຮູ້ເຂົ້າ-
ໃຈໄດ້ ເພື່ອພວກເຈົ້າຊິອິ່ມອົກອິ່ມໃຈດ້ວຍຄວາມສົມບູນຂອງພຣະເຈົ້າ
3:20 ບັດນີ້ ສາທຸການພຣະເຈົ້າ ຜູ້ເພິ່ນສາມາດທີ່ຊິເຮັດຄູ່ຢ່າງໄດ້ ເກີນກວ່າທີ່ເຮົາ
ອາດ ຊິຂໍ ຫລືນຶກໄດ້ ຕາມລິດອໍານາດ *ເພິ່ນ* ທີ່ເຮັດງານໃນໃຈຂອງພວກເຮົາ
3:21 ຂໍໃຫ້ພຣະເຈົ້າໄດ້ຮັບກຽດໃນກຸ່ມຜູ້ເຊື່ອໂດຍທາງ ພຣະເຢຊູຄຣິດ ເຖິງຄູ່ຊົ່ວ
ອາຍຸຄົນ ຕະຫລອດການເປັນນິດ ອາເມນ

# ເອເຟໂຊ ບົດທີ 4

4:1 ຈັ່ງຊັ້ນ ຂ້ອຍ ໂປໂລ ນີ້ ເປັນນັກໂທດຖືກຈອງຈຳໃນຄຸກ ຍ້ອນເຫັນແກ່ອົງ-
ພຣະຜູ້ເປັນເຈົ້າ ຈັ່ງໄດ້ຂໍຮ້ອງໃຫ້ພວກເຈົ້າດຳເນີນຊີວິດໃຫ້ສົມກັບຖານະທີ່
ພຣະເຈົ້າໄດ້ເອີ້ນມານັ້ນ
4:2 ດ້ວຍການຖ່ອມໃຈ ມີໃຈອ່ອນສຸພາບ ອົດທົນໄວ້ນານ ເຫັນອົກເຫັນໃຈກັນ
ໂດຍອາໄສຄວາມຮັກ *ແບບຂອງພຣະເຈົ້າ*
4:3 ຈົ່ງພະຍາຍາມຮັກສາຄວາມເປັນໜຶ່ງໃນອົງ ພຣະວິນຍານ ໂດຍສັນຕິພາບ
*ໃນພຣະເຈົ້າ* ເປັນແນວຜູກມັດກັນໄວ້
4:4 ໂດຍວ່າມີກຸ່ມຜູ້ເຊື່ອແຕ່ກຸ່ມດຽວ ມີ ພຣະວິນຍານ ແຕ່ອົງດຽວ ມີຄວາມຫວັງ
ອັນໝັ້ນຄົງແຕ່ທາງດຽວທີ່ພຣະເຈົ້າໄດ້ເຊີນພວກເຈົ້າມານັ້ນ
4:5 ມີອົງພຣະຜູ້ເປັນເຈົ້າແຕ່ຜູ້ດຽວ ມີຄວາມເຊື່ອແຕ່ທາງດຽວ ມີການຮັບບັບຕິດ-
ສະມາເຂົ້າມີສ່ວນຮ່ວມແຕ່ຢ່າງດຽວ
4:6 ມີພຣະເຈົ້າແຕ່ຜູ້ດຽວທີ່ເປັນພໍ່ຂອງຄົນທັງປວງ ຢູ່ເໜືອໝົດຄູ່ແນວ ຊຶ່ງວ່າ
ໝົດຄູ່ແນວເປັນໄປໄດ້ໂດຍເພິ່ນ ແລ້ວເພິ່ນກໍຢູ່ໃນພວກເຈົ້າຄູ່ຄົນນຳ
4:7 ກັບວ່າ ເພິ່ນໄດ້ໂຜດໃຫ້ພຣະກະລຸນາທິຄຸນກັບພວກເຮົາ ຕາມຂະໜາດການ
ອວຍພອນຂອງ ພຣະຄຣິດ
4:8 ຕາມຄຳທຳນາຍວ່າ "ບັດເພິ່ນໄດ້ສະເດັດຂຶ້ນໄປປະທັບຢູ່ໜ້ອງສູງ ເພິ່ນໄດ້
ນຳເອົາຜູ້ກັກຂະເລີຍໃຫ້ເປັນຂະເລີຍເອງ ພ້ອມທັງນຳຂອງຂວັນມາໃຫ້ຜູ້ຄົນນຳ"
4:9 ແລ້ວຄຳວ່າ "ເພິ່ນໄດ້ສະເດັດຂຶ້ນໄປ" ໝາຍຄວາມວ່າ ເພິ່ນຊິຕ້ອງລົງມາຊະ
ກ່ອນ ເຂົ້າສູ່ແດນລຸ່ມຂອງແຜ່ນດິນໂລກນີ້
4:10 ແລ້ວເພິ່ນຜູ້ທີ່ລົງມາ ກໍເປັນຜູ້ດຽວກັນກັບຜູ້ທີ່ສະເດັດຂຶ້ນໄປ ຢູ່ເໜືອກວ່າຊັ້ນ
ຟ້າສະຫວັນທັງໝົດ ເພື່ອໃຫ້ໝົດຄູ່ຢ່າງເຕັມໄປໂດຍ *ພຣະບາລະມີຂອງ* ເພິ່ນ
4:11 ແລ້ວເພິ່ນໄດ້ຕັ້ງຜູ້ລາງຄົນໃຫ້ເປັນທູດພິເສດ ລາງຄົນເປັນຜູ້ເປັນປາກເປັນ-
ສຽງ ລາງຄົນເປັນຜູ້ປະກາດຂ່າວປະເສີດ ລາງຄົນເປັນຜູ້ລ້ຽງເບິ່ງແຍງ ລາງຄົນ
ເປັນຜູ້ຝຶກສອນ

4:12 ເພື່ອອົບຮົມກຽມເຂົາໃຫ້ເປັນງານໃນການຮັບໃຊ້ ເພື່ອຊິໄດ້ເສີມສ້າງໝູນໃຈ
ຄົນໃນກຸ່ມຜູ້ເຊື່ອ ອັນເປັນຮ່າງເປັນພຣະກາຍຂອງພຣະຄຣິດ
4:13 ຈົນກວ່າພວກເຮົາໝົດຄູ່ຄົນຊິໄດ້ເຂົ້າມາເປັນນໍ້າໜຶ່ງໃຈດຽວກັນຢ່າງຖືກຕ້ອງ
ໃນຫລັກຄວາມເຊື່ອ ເຂົ້າໃຈດີໃນເລື່ອງ ພຣະເຢຊູ ພຣະບຸດ ຂອງພຣະເຈົ້າ ຈັ່ງ-
ໄດ້ເປັນຜູ້ໃຫຍ່ໃນ ພຣະເຢຊູຄຣິດ ຢ່າງສົມບູນແບບ
4:14 ເພື່ອພວກເຮົາຊິບໍ່ເປັນເດັກນ້ອຍຕໍ່ໄປ ຖືກເປົ່າຫູຊັດໄປຊັດມາໂດຍຄໍາສອນ
ທົ່ວທິບທົ່ວແດນທີ່ມາທາງພວກຜູ້ບໍ່ຫວັງດີ ໂດຍໃຊ້ເລ່ກົນ ດັກຫລອກຄົນໃຫ້ຫລົງ
ໄປນໍາ
4:15 ແຕ່ດ້ວຍການບອກສອນຄວາມຈິງດ້ວຍໃຈຮັກ ຊິໄດ້ຈະເລີນຂຶ້ນເປັນຜູ້ໃຫຍ່
ໃນຄູ່ຢ່າງໃນເພິ່ນຜູ້ເປັນຫົວໜ້າເປັນປະລະບຽງນັ້ນ ຄື ພຣະຄຣິດ
4:16 ຊຶ່ງຄົນທັງມວນທີ່ຮ່ວມເປັນພຣະກາຍຂອງເພິ່ນ ຊິໄດ້ປະສານງານ ຮ່ວມເຂົ້າ
ກັນຢ່າງຄ່ອງຕາມໜ້າທີ່ຂອງໃຜຂອງມັນ ເພື່ອຊ່ອຍກັນເສີມສ້າງໃຫ້ຈະເລີນຂຶ້ນ
ໂດຍຄວາມຮັກແພງຕໍ່ກັນ
4:17 ຈັ່ງຊັ້ນ ຂ້ອຍຂໍຢືນຢັນໃນອົງພຣະຜູ້ເປັນເຈົ້າວ່າ ພວກເຈົ້າບໍ່ຄວນຊິດໍາເນີນ
ຊີວິດໄປໃນທາງເກົ່າຂອງຄົນຕ່າງຊາດອີກຕໍ່ໄປ ໂດຍດໍາເນີນຕາມໃຈຮວມກັນ
ຂອງເຂົາ ຄຶດແຕ່ແນວທີ່ບໍ່ມີຄຸນຄ່າອີຫຍັງ
4:18 ຄືຄວາມເຂົ້າໃຈຂອງພວກເຂົາຖືກມືດລົງ ບໍ່ມີສິດມີສ່ວນໃນຊີວິດຂອງພຣະ-
ເຈົ້າເລີຍ ກໍຍ້ອນຄວາມໂງ່ຂອງພວກເຂົາ ກັບຍ້ອນຈິດໃຈຂອງເຂົາບອດໄປນໍາ
4:19 ຊຶ່ງເຂົາບໍ່ມີຄວາມຮູ້ສຶກສໍານຶກອີຫຍັງເລີຍ ຈັ່ງໄດ້ມອບໂຕເອງໄວ້ໃນແນວ
ຮວມກັນສຸມ ເຮັດແຕ່ແນວຊົ່ວຊ້າເລວຊາມໝົດ ເຫັນແກ່ໂຕແກ່ໄດ້
4:20 ແຕ່ພວກເຈົ້າບໍ່ໄດ້ຮຽນຮູ້ຈາກ ພຣະຄຣິດ ແນວນັ້ນ
4:21 ຄັນແມ່ນວ່າພວກເຈົ້າໄດ້ຍິນໄດ້ຮູ້ຈັກ ພຣະເຢຊູ ອີຫລີ ແລ້ວໄດ້ຮັບການສອນ
ຈິດໃຈຈາກເພິ່ນ ຕາມທາງຄວາມຈິງຊຶ່ງຢູ່ໃນເພິ່ນ
4:22 ຈັ່ງໃຫ້ພວກເຈົ້າຖອດແນວຕ່າງໆ ຂອງພຶດຕິກໍາເດີມໃຫ້ອອກໄປ ຄືຊີວິດຄົນ
ເກົ່ານັ້ນ ທີ່ພວມຊິເສື່ອມໄປຕາມຕັນຫາແຫ່ງເພດ ຊຶ່ງເປັນແນວຫລອກລວງ
4:23 ແລ້ວໃຫ້ມີໃຈໃໝ່ ມີຄວາມຄຶດໃໝ່

4:24 ແລ້ວໃຫ້ສວມຊີວິດຄົນໃໝ່ ເປັນຊີວິດທີ່ຖືກສ້າງຂຶ້ນມາໃໝ່ແບບຢ່າງພຣະ-
ເຈົ້າ ວ່າເປັນຜູ້ຊອບທຳ ກັບເປັນຜູ້ບໍລິສຸດສະເພາະພຣະເຈົ້າຢ່າງແທ້ຈິງ
4:25 ຈັ່ງຊັ້ນ ໃຫ້ເຊົາເວົ້າຂີ້ຕົວະຫລອກລວງກັນເດີ້ "ໃຫ້ຄູ່ຄົນເວົ້າແຕ່ແນວເປັນຈິງຕໍ່
ກັນແລະກັນ" ຍ້ອນວ່າພວກເຮົາຕ່າງເປັນອະໄວຍະວະຊິ່ງກັນແລະກັນ
4:26 "ຄັ່ນຊິຮ້າຍກໍຮ້າຍ ໂລດ ແຕ່ຢ່າໃຫ້ເຖິງເປັນບາບ" ຄືບັດຮ້າຍແລ້ວກໍຢ່າໃຫ້
ມັນເລີຍມື້ເລີຍຄ່ຳເດີ້
4:27 ແລ້ວຢ່າເປີດຊ່ອງທາງໃຫ້ ພະຍາມານ ມີໂອກາດຫລິ້ນງານເຈົ້າໄດ້
4:28 ຝ່າຍຜູ້ທີ່ເຄີຍຂີ້ລັກ ກໍຢ່າຂີ້ລັກອີກຕໍ່ໄປເດີ້ ແຕ່ໃຫ້ລົງມືເຮັດວຽກເຮັດງານໃນ
ທາງທີ່ດີງາມ ເພື່ອຊິໄດ້ມີແນວແບ່ງປັນໃຫ້ກັບຜູ້ທີ່ທຸກຍາກລຳບາກ
4:29 ແລ້ວຢ່າໃຫ້ມີຄຳເພີແນວບໍ່ຈົບອອກຈາກປາກຂອງພວກເຈົ້າເດີ້ ແຕ່ໃຫ້ເວົ້າ
ແຕ່ແນວດີງາມທີ່ມີເຫດມີຜົນ ທີ່ເປັນພຣະຄຸນເປັນແນວເສີມສ້າງໃນຫູຂອງຜູ້ຟັງ
4:30 ກັບຢ່າໃຫ້ ພຣະວິນຍານ ຂອງພຣະເຈົ້າເສຍນ້ຳໃຈເດີ້ ຊຶ່ງເປັນຜູ້ທີ່ປະທັບຕາ
ຮັບຮອງເຈົ້າໄວ້ ມຸ້ງເຖິງມື້ທີ່ພຣະເຈົ້າຊິມາຮັບເອົານັ້ນ
4:31 ກັບໃຫ້ຄວາມຂົມຂື່ນ ໂມໂຫໂຫໂສ ເລືອດຂຶ້ນຕາ ຄຽດແຄ້ນຊັງກັນ ເວົ້າ
ໃສ່ຮ້າຍກັນ ທຳລາຍຊື່ສຽງກັນ ຮ່ວມທັງຄວາມຊົ່ວຮ້າຍຄູ່ຢ່າງ ໃຫ້ອອກຈາກ
ພວກເຈົ້າເດີ້
4:32 ແຕ່ໃຫ້ມີນ້ຳໃຈອັນດີງາມຕໍ່ກັນ ມີໃຈອ່ອນນ້ອມເຫັນອົກເຫັນໃຈກັນ ໃຫ້ອະ-
ໄພໂທດກັນ ຄືກັນກັບພຣະເຈົ້າໄດ້ໃຫ້ອະໄພໂທດບາບພວກເຈົ້າໄດ້ແລ້ວໃນ
ພຣະເຢຊູຄຣິດ

## ເອເຟໂຊ ບົດທີ 5

5:1 ຈັ່ງຊັ້ນ ໃຫ້ເປັນຜູ້ຈະເລີນຮອຍຕາມແບບຢ່າງພຣະເຈົ້າຜູ້ເປັນພໍ່ເດີ້ ໃຫ້ສົມກັບ
ວ່າເປັນລູກໆ ທີ່ຮັກຂອງເພິ່ນ
5:2 ແລ້ວໃຫ້ດຳເນີນຊີວິດຢູ່ໃນຄວາມຮັກ ຄືກັນກັບທີ່ ພຣະຄຣິດ ໄດ້ຮັກແພງສະ-
ລະຊີວິດໂຕເພິ່ນເອງເພື່ອພວກເຮົາ ເຖິງເປັນເຄື່ອງຖວາຍບູຊາ ຢ່າງເຄື່ອງຫອມ
ແນວທີ່ພຣະເຈົ້າພໍໃຈ

5:3 ແຕ່ສຳລັບການຫລິ້ນຊູ້ ແນວບໍ່ບໍລິສຸດ ກັບຄວາມຂີ້ໂລບ ກໍຢ່າໃຫ້ແນວໝູ່ນີ້
ເກີດຂຶ້ນນຳພວກເຈົ້າ ຕາມຊື່ວ່າເປັນຄົນຂອງພຣະເຈົ້າເດີ້
5:4 ບໍ່ວ່າຊິເປັນ ການເວົ້າແນວເພີ ແນວບໍ່ເປັນສາລະ ແນວຢອກທາງຫຍາບ ຊຶ່ງ
ແນວໝູ່ນີ້ມັນກໍບໍ່ເໝາະສົມຄືກັນ ແຕ່ວ່າຄວນເວົ້າແນວຂອບໃຈພຣະເຈົ້າດີກວ່າ
5:5 ຄືພວກເຈົ້າຮູ້ວ່າ ຄົນຫລິ້ນຊູ້ ຄົນຊົ່ວຊ້າເລວຊາມ ຄົນຂີ້ໂລບ ຄືກັນກັບຄົນທີ່
ຮວມກັນແຕ່ໄຫວ້ຮູບເຄົາລົບ ຄົນຈຳພວກນີ້ບໍ່ມີສິດມີສ່ວນໃນມໍລະດົກໃນລາຊະ-
ອານາຈັກຂອງພຣະຄຣິດກັບພຣະເຈົ້າ
5:6 ຢ່າຫລົງຄຳລໍ້ລວງຂອງໃຜເດີ້ ຍ້ອນວ່າ ຄວາມໂມໂຫຂອງພຣະເຈົ້າຊິລົງມາ
ໃສ່ພວກຄົນທີ່ບໍ່ຮູ້ຈັກເຊື່ອຟັງຈັ່ງຊີ້
5:7 ຈັ່ງຊັ້ນ ເຈົ້າຢ່າໄປເຮັດນຳພວກເຂົາເດີ້
5:8 ຄືແຕ່ກ່ອນພວກເຈົ້າກໍເຄີຍຢູ່ໃນຄວາມມືດ ແຕ່ທັນທີຢູ່ໃນຄວາມແຈ້ງສະ-
ຫວ່າງຂອງອົງພຣະຜູ້ເປັນເຈົ້າແລ້ວ ຈັ່ງຊັ້ນ ໃຫ້ດຳເນີນຊີວິດຢ່າງເປັນຄົນຂອງ
ຄວາມແຈ້ງເດີ້
5:9 (ດ້ວຍວ່າ ຜົນຂອງ ພຣະວິນຍານ ຄືຄວາມດີ ຄວາມເປັນທຳ ກັບຄວາມຈິງ)
5:10 ຈັ່ງພິສູດໄດ້ວ່າ ອີຫຍັງໄດ້ເປັນທີ່ຄວນພໍໃຈຂອງອົງພຣະຜູ້ເປັນເຈົ້າ
5:11 ກັບຢ່າມີສ່ວນຮ່ວມກັບການງານຝ່າຍຄວາມມືດນັ້ນອັນບໍ່ມີຜົນດີອີຫຍັງເດີ້
ແຕ່ໃຫ້ຕັກເຕືອນ ເປີດເຜີຍອອກມາເດີ້
5:12 ຄືມັນເປັນຕາອາຍ ແມ່ນແຕ່ຊິເວົ້າເຖິງແນວທີ່ພວກເຂົາເຮັດໃນທີ່ລັບ
5:13 ແຕ່ຄູ່ແນວທີ່ຖືກເປີດເຜີຍອອກມານັ້ນ ກໍເຫັນໄດ້ດ້ວຍຄວາມແຈ້ງ ແລ້ວ
ຄວາມແຈ້ງນັ້ນເປັນແນວທີ່ເປີດເຜີຍຄູ່ຢ່າງໃຫ້ເຮົາເຫັນໄດ້ຊັດ
5:14 ສົມພໍເຂົາຈັ່ງວ່າ "ເຈົ້າຜູ້ທີ່ຫລັບໄປກໍໃຫ້ສ່າງນອນລຸກຂຶ້ນເດີ້ ແລ້ວ ພຣະ-
ຄຣິດ ຊິສ່ອງແສງສະຫວ່າງໃຫ້ເຈົ້າ"
5:15 ຈັ່ງໃຫ້ດຳເນີນຊີວິດຢ່າງລະມັດລະວັງໄວ້ເດີ້ ຄືກັນກັບຄົນມີປັນຍາ ບໍ່ແມ່ນຄື
ຄົນໂງ່
5:16 ແລ້ວຢ່າພາດໂອກາດໃນການເຮັດແນວດີເດີ້ ຍ້ອນຄູ່ມື້ນີ້ເປັນຍາມຊົ່ວແລ້ວ

5:17 ຈັ່ງຊັ້ນ ຢ່າເຮັດຄືບໍ່ມີປັນຍາເດີ້ ແຕ່ໃຫ້ເຂົ້າໃຈດີໃນພຣະປະສົງຂອງພຣະ-
ເຈົ້າ
5:18 ແລ້ວຢ່າເມົາດ້ວຍເຫລົ້າອະງຸ່ນເລີຍ ຊຶ່ງນໍາພາໄປສູ່ຄວາມເສຍຫາຍໄປໜ້າ
ແຕ່ໃຫ້ອີ່ມໜໍາດ້ວຍ *ການນໍາພາຂອງ* ພຣະວິນຍານ ເດີ້
5:19 ໃຫ້ເວົ້າໜູນໃຈກັນແລະກັນໂດຍ ບົດ ເພງສັນລະເສີນ ເພງນະມັດສະການ
ກັບເພງສັນລະເສີນທາງຈິດວິນຍານ ຈັ່ງຮ້ອງດ້ວຍສຽງ ກັບດ້ວຍທໍານອງຢູ່ໃນ
ໃຈ ຖວາຍແດ່ພຣະເຈົ້າ
5:20 ແລ້ວຈັ່ງຂອບໃຈພຣະເຈົ້າຜູ້ເປັນພໍ່ສໍາລັບໝົດຄູ່ແນວຢູ່ສະເໝີ ໂດຍໃນນາມ
ຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ
5:21 ຈັ່ງມີໃຈຍອມຟັງສຽງກັນແລະກັນ ໂດຍຄວາມຢ້ານກົວພຣະເຈົ້າ
5:22 ແລ້ວສໍາລັບຜູ້ເປັນເມຍ ໃຫ້ຍອມຢູ່ໃຕ້ຜົວໂຕເອງເດີ້ ຄືກັນກັບໃຕ້ອົງພຣະຜູ້-
ເປັນເຈົ້າ
5:23 ໂດຍວ່າ ຜົວເປັນຫົວໜ້າຂອງເມຍ ຄືກັນກັບທີ່ ພຣະຄຣິດ ເປັນຫົວໜ້າຂອງ
ກຸ່ມຜູ້ເຊື່ອ ກັບເພິ່ນເປັນພຣະຜູ້ໂຜດຂອງພຣະກາຍນັ້ນ
5:24 ຈັ່ງຊັ້ນ ກຸ່ມຜູ້ເຊື່ອຢູ່ໃຕ້ ພຣະເຢຊູຄຣິດ ຈັ່ງໃດ ກໍຂໍໃຫ້ຜູ້ເປັນເມຍຢູ່ຈັ່ງຊັ້ນໃນ
ໝົດຄູ່ແນວຕໍ່ຜົວຂອງໂຕເອງ
5:25 ສໍາລັບຜູ້ເປັນຜົວ ກໍໃຫ້ມີໃຈຮັກແພງເມຍຂອງໂຕເອງ ຄືກັນກັບທີ່ ພຣະຄຣິດ
ໄດ້ຮັກແພງກຸ່ມຜູ້ເຊື່ອ ຈົນເພິ່ນໄດ້ເສຍສະລະຊີວິດໃຫ້ນາງ
5:26 ເພື່ອເພິ່ນຊິໄດ້ແຍກກຸ່ມຜູ້ເຊື່ອອອກໄວ້ໃຫ້ນາງເປັນທີ່ບໍລິສຸດສະເພາະພຣະ-
ເຈົ້າ ໂດຍ ພຣະຄໍາ ເປັນນໍ້າຊໍາລະລາງ
5:27 ເພື່ອເພິ່ນຊິໄດ້ຮັບມອບໝາຍ ກຸ່ມຜູ້ເຊື່ອມີສັກສີອັນຮຸ່ງເຮືອງ ເພື່ອເພິ່ນເອງ
ຊຶ່ງບໍ່ມີຈຸດດ່າງພ້ອຍ ມີຮອຍຫຍໍ່ ຫລື ມີແນວມົນທິນໃດໆ ແຕ່ນາງຊິເປັນຜູ້ດີພ້ອມ
ບໍລິສຸດໝົດຈົດ ບໍ່ມີໝ້ອງຕິເລີຍ
5:28 ຈັ່ງຊັ້ນ ໃນທໍານອງດຽວກັນ ສ່ວນຜູ້ເປັນຜົວຄວນຊິຮັກແພງເມຍຂອງໂຕ ຄື-
ກັນກັບຮັກແພງໂຕເອງ ຍ້ອນວ່າ ຜູ້ທີ່ຮັກເມຍກໍທໍ່ກັບຮັກໂຕເອງ

5:29 ຄືບໍ່ເຄີຍມີໃຜທີ່ຊັງໂຕເຈົ້າຂອງເອງ ມີແຕ່ເອົາໃຈໃສ່ເບິ່ງແຍງໄວ້ຢ່າງດີ ຄື-
ກັນກັບທີ່ ພຣະເຢຊູເຈົ້າ ໄດ້ເຮັດຕໍ່ກຸ່ມຜູ້ເຊື່ອນັ້ນ
5:30 ຍ້ອນວ່າ ພວກເຮົາໄດ້ເປັນອະໄວຍະວະ ເປັນສ່ວນຕ່າງໆ ຂອງພຣະກາຍ
ເພິ່ນ ຄືເປັນເລືອດຊີ້ນເຊື້ອໄຂຂອງເພິ່ນ
5:31 ຍ້ອນເຫດນີ້ເນາະ "ຜູ້ຊາຍກັບຊາວຈັ່ງແຍກອອກຈາກພໍ່ແມ່ໄປຢູ່ນຳກັນເປັນ
ຜົວເມຍກັນ ເປັນເລືອດຊີ້ນເຊື້ອໄຂອັນດຽວກັນ"
5:32 ນີ້ກໍເປັນເລື່ອງເລິກລຶກຫລາຍ ແຕ່ທີ່ຂ້ອຍເວົ້ານີ້ ຂ້ອຍເວົ້າເວົ້າເຖິງ ພຣະ-
ຄຣິດ ກັບກຸ່ມຜູ້ເຊື່ອ
5:33 ຈັ່ງໃດກໍຕາມ ຂໍໃຫ້ພວກເຈົ້າແຕ່ລະຄົນ ຮັກແພງເມຍຂອງໂຕຄືກັນກັບຮັກໂຕ
ເອງເດີ້ ແລ້ວສ່ວນຜູ້ເປັນເມຍ ກໍເຄົາລົບໃຫ້ກຽດຜົວຂອງໂຕເອງນຳ

## ເອເຟໂຊ ບົດທີ 6

6:1 ແລ້ວສຳລັບຜູ້ເປັນລູກ ກໍໃຫ້ເຊື່ອຟັງພໍ່ແມ່ ໂດຍເຫັນແກ່ພຣະເຈົ້າເດີ້ ຍ້ອນວ່າ
ການເຮັດແນວນີ້ກໍເປັນການຖືກຕ້ອງແລ້ວ
6:2 ໃຫ້ "ເຄົາລົບໃຫ້ກຽດພໍ່ແມ່" ໄດ້ເປັນຂໍ້ແຮກໃນກົດບັນຍັດ ທີ່ມີຄຳສັນຍາໄວ້
ພ້ອມ
6:3 ສັນຍາວ່າ "ເພື່ອເຈົ້າຊິຢູ່ດີມີແຮງ ມີຊີວິດຢືນຍາວໃນໂລກນີ້"
6:4 ແລ້ວສຳລັບຜູ້ເປັນພໍ່ ກໍຢ່າເຮັດຍົວະລູກໃຫ້ຄຽດຮ້າຍເດີ້ ແຕ່ໃຫ້ຄອຍຖ້າລ້ຽງ
ເບິ່ງໄວ້ ດ້ວຍການຝຶກອົບຮົມຕາມຫລັກຄຳສອນຂອງອົງພຣະຜູ້ເປັນເຈົ້າເດີ້
6:5 ສຳລັບຜູ້ເປັນຂ້າທາດຮັບໃຊ້ ກໍໃຫ້ເຄົາລົບເຊື່ອຟັງຮັບໃຊ້ນາຍທາງໂລກນີ້
ດ້ວຍຢ້ານຢໍາໂຕສັ່ນ ດ້ວຍມີໃຈດຽວຄືຮັບໃຊ້ ພຣະຄຣິດ
6:6 ບໍ່ແມ່ນເຮັດດີຍາມຢູ່ຕໍ່ໜ້າ ຄືກັນກັບພວກຜູ້ທີ່ມັກເຮັດເອົາໃຈຄົນ ແຕ່ໃຫ້ເຮັດ
ຢ່າງສົມກັບວ່າເປັນຜູ້ຮັບໃຊ້ຂອງ ພຣະເຢຊູຄຣິດ ຄືເຮັດຕາມຈຸດປະສົງພຣະ-
ເຈົ້າຈາກໃຈຈິງ
6:7 ໃຫ້ຮັບໃຊ້ດ້ວຍນ້ຳໃຈດີ ຄືຮັບໃຊ້ອົງພຣະຜູ້ເປັນເຈົ້າ ບໍ່ແມ່ນຮັບໃຊ້ຄົນຊື່ໆ
6:8 ໂດຍຮູ້ກັນໄວ້ວ່າ ແນວດີງາມທີ່ຄົນຜູ້ໃດໄດ້ເຮັດ ຜູ້ນັ້ນກໍຊິຮັບການຕອບແທນ
ແນວດຽວກັນຈາກອົງພຣະຜູ້ເປັນເຈົ້າ ຊິເປັນຂ້າທາດຫລື ໄທ ກໍຢ່າ

6:9 ແລ້ວສຳລັບຜູ້ເປັນນາຍ ກໍໃຫ້ເຮັດດີນຳເຂົາຄືກັນເດີ້ ໃຫ້ມີໃຈອົດທົນ ຢ່າຂູ່-
ເຂັນຮ້າຍເຂົາ ໂດຍຮູ້ກັນວ່າ ນາຍຂອງເຈົ້າກໍຢູ່ເທິງສະຫວັນ ແລ້ວເພິ່ນບໍ່ໄດ້ເຂົ້າ
ຂ້າງເຫັນແກ່ໜ້າຜູ້ໃດເລີຍ
6:10 ສຸດທ້າຍນີ້ ພີ່ນ້ອງເອີຍ ໃຫ້ເຂັ້ມແຂງໃນອົງພຣະຜູ້ເປັນເຈົ້າເດີ້ ຊຶ່ງລິດອຳ-
ນາດຂອງເພິ່ນເປັນກຳລັງຂອງເຈົ້າ
6:11 ໃຫ້ກຽມພ້ອມໂດຍສວມຊຸດນັກຮົບຂອງພຣະເຈົ້າເດີ້ ເພື່ອເຈົ້າຊິສາມາດຢືນ
ໝັ້ນຄົງໄດ້ ຕໍ່ລູກຫລິ້ນອັນເລ້ຫລ່ຽມຂອງ ພະຍາມານ
6:12 ຍ້ອນວ່າ ພວກເຮົາບໍ່ໄດ້ຕໍ່ສູ້ກັບຄົນ ແຕ່ໄດ້ສູ້ກັບເທວາດາຜູ້ສັກສິດ ກັບເທ-
ວາດາຜູ້ມີອຳນາດສູງ ກັບເທວາດາຜູ້ທີ່ຄອງເໜືອຄວາມມືດທາງຍຸກນີ້ ກັບພວກ
ວິນຍານທີ່ເປັນເຈົ້າແຫ່ງຄວາມຊົ່ວໃນທີ່ສູງຢູ່ທ້ອງຟ້າ
6:13 ຈັ່ງຊັ້ນ ໃຫ້ຮັບເອົາຊຸດນັກຮົບຂອງພຣະເຈົ້າເດີ້ ເພື່ອຊິຕໍ່ຕ້ານໄດ້ໃນມື້ຊົ່ວ
ຮ້າຍ ແລ້ວພໍເຮັດໝົດແລ້ວກໍຊິຢືນຢູ່ໄດ້ຢ່າງໝັ້ນຄົງ
6:14 ຈັ່ງຊັ້ນ ໃຫ້ຢືນຢູ່ຫັ້ນໂດຍອາໄສຄວາມສັດຈິງເປັນແນວຄາດແອວ ແລ້ວອາ-
ໄສຄວາມຊອບທຳຕໍ່ພຣະເຈົ້າເປັນເສື້ອເກາະປ້ອງກັນໜ້າເອິກ
6:15 ກັບອາໄສການກຽມພ້ອມໃນຂ່າວປະເສີດແຫ່ງສະຫງົບສຸກສວມໄວ້ເປັນແນວ
ປ້ອງກັນຕີນ
6:16 ແລ້ວເໜືອກວ່າໝົດນັ້ນ ໃຫ້ອາໄສຄວາມເຊື່ອ ເປັນໂລ້ເພື່ອຮັບມອດລູກ-
ສອນໄຟຂອງ ພະຍາມານ ຮ້າຍນັ້ນ
6:17 ແລ້ວໃຫ້ອາໄສຄວາມລອດພົ້ນເປັນໝວກປ້ອງກັນຫົວ ກັບໃຫ້ຮັບເອົາພຣະ-
ແສງຊຶ່ງເປັນດາບສູ້ຝ່າຍ ພຣະວິນຍານ ແມ່ນ ພຣະຄຳ ຂອງພຣະເຈົ້າ
6:18 ແລ້ວຈັ່ງອະທິຖານວອນຂໍນຳພຣະເຈົ້າໂດຍໃນ ພຣະວິນຍານ ຢູ່ສະເໝີ ໃຫ້ມີ
ໃຈຈົດຈໍ່ ພາກພຽນໃນຄູ່ຢ່າງ ວອນຂໍເພື່ອພີ່ນ້ອງຄົນຂອງພຣະເຈົ້າໝົດຄູ່ຄົນ
6:19 ແລ້ວໃຫ້ວອນຂໍເພື່ອຂ້ອຍນຳແໜ່ ເພື່ອຂ້ອຍຊິໄດ້ຮັບຄຳເວົ້າ ກັບມີຄວາມກ້າ
ໃນຄວາມເວົ້ານຳ ເພື່ອຊິໄດ້ບອກສອນໃຫ້ຄົນຮູ້ຈັກໃນຂໍ້ລ້ຳເລິກທາງຂ່າວປະ-
ເສີດນັ້ນ

6:20 ແມ່ນຍ້ອນເລື່ອງນີ້ເນາະ ທີ່ຂ້ອຍຜູ້ເປັນທູດທີ່ຖືກລ່າມໂສ້ໄວ້ ຊຶ່ງແມ່ນແຕ່ໃນ
ກໍລະນີນີ້ ຂ້ອຍຊິໄດ້ເວົ້າຢູ່ຢ່າງກ້າຫານຕາມທີ່ຄວນ
6:21 ແລ້ວເພື່ອພວກເຈົ້າຊິໄດ້ຮູ້ຂ່າວຂອງຂ້ອຍຢູ່ທາງນີ້ ມີຄົນຊື່ວ່າ ຕີຂີໂກ ຊຶ່ງຜູ້
ນີ້ເປັນນ້ອງຮັກໃນພຣະເຈົ້າ ເປັນຜູ້ຊື່ສັດທີ່ຮັບໃຊ້ອົງພຣະຜູ້ເປັນເຈົ້າດ້ວຍໃຈຈິງ
ເພິ່ນເອງຊິບອກໝົດຄູ່ແນວໃຫ້ພວກເຈົ້າຮູ້ຈັກ
6:22 ຊຶ່ງຂ້ອຍໄດ້ໃຊ້ເຂົາມາຫາພວກເຈົ້າເພື່ອເຫດນີ້ໂດຍສະເພາະ ຄືເພື່ອພວກ
ເຈົ້າຊິຮູ້ຈັກເລື່ອງຄວາມເປັນຢູ່ຂອງພວກເຮົາຢູ່ທາງນີ້ ແລ້ວເພື່ອເພິ່ນຊິໜຸນໃຈ
ພວກເຈົ້ານຳ
6:23 ສຸດທ້າຍນີ້ ຂໍໃຫ້ພີ່ນ້ອງມີຄວາມສະຫງົບສຸກ ຄວາມຮັກ ພ້ອມທັງຄວາມ
ເຊື່ອໝັ້ນ ຈາກພຣະເຈົ້າຜູ້ເປັນພໍ່ ກັບຈາກອົງພຣະເຢຊູຄຣິດເຈົ້າ
6:24 ແລ້ວຂໍໃຫ້ພຣະກະລຸນາທິຄຸນມີແດ່ຄູ່ຄົນທີ່ຮັກອົງພຣະເຢຊູຄຣິດເຈົ້າຂອງ
ພວກເຮົາດ້ວຍໃຈຈິງ ເຖີ້ນ ອາເມນ

*[ຂຽນເຖິງຊາວ ເອເຟໂຊ ຈາກ ໂຣມ ສົ່ງໂດຍ ຕີຂີໂກ]*

# ຟີລິບປອຍ

## ຟີລິບປອຍ ບົດທີ 1

1:1 ຮຽນພີ່ນ້ອງຄົນຂອງພຣະເຈົ້າໝົດຄູ່ຄົນຜູ້ຢູ່ໃນ ພຣະເຢຊູຄຣິດ ຢູ່ເມືອງ ຟີລິບ-
ປອຍ ພ້ອມທັງພວກຜູ້ເບິ່ງແຍງກັບພວກຜູ້ຊ່ອຍນຳ ຈາກ ໂປໂລ ກັບ ຕີໂມທຽວ
ຂ້າທາດຮັບໃຊ້ຂອງ ພຣະເຢຊູຄຣິດ
1:2 ຂໍໃຫ້ພຣະກະລຸນາທິຄຸນກັບຄວາມສະຫງົບສຸກຈາກພຣະເຈົ້າຜູ້ເປັນພໍ່ຂອງ
ພວກເຮົາ ກັບຈາກອົງພຣະເຢຊູຄຣິດເຈົ້າ ດຳລົງຢູ່ກັບພວກເຈົ້າເດີ້
1:3 ຂ້ອຍຂອບໃຈພຣະເຈົ້າຂອງຂ້ອຍ ຍາມໃດທີ່ຂ້ອຍຄຶດຮອດພວກເຈົ້າ
1:4 ຂ້ອຍຈັ່ງຂໍຮ້ອງເພື່ອພວກເຈົ້າດ້ວຍຄວາມຊົມຊື່ນຍິນດີຢູ່ສະເໝີ ໃນຄູ່ຄຳຂໍຮ້ອງ
ທີ່ຂ້ອຍວິງວອນອະທິຖານນັ້ນ
1:5 ເພື່ອຄວາມສາມັກຄີຮ່ວມກັບພວກເຈົ້າໃນການເຜີຍແຜ່ຂ່າວປະເສີດ ນັບຕັ້ງ
ແຕ່ມື້ທຳອິດມາຈົນຮອດບັດນີ້

1:6 ຂ້ອຍຈັ່ງແນ່ໃຈໃນແນວນີ້ວ່າ ຜູ້ເພິ່ນທີ່ໄດ້ພວມເຮັດການດີໃນຊີວິດຂອງພວກ
ເຈົ້າ ເພິ່ນກໍຊິເຮັດເຖິງສຳເລັດ ຈົນຮອດມື້ຂອງ ພຣະເຢຊູຄຣິດ ຊິມາ
1:7 ແມ່ນແຕ່ວ່າ ມັນສົມຄວນແລ້ວທີ່ຂ້ອຍຊິຄຶດຮອດພວກເຈົ້າແນວນີ້ ຄືພວກເຈົ້າ
ຢູ່ໃນຈິດໃຈຂອງຂ້ອຍ ທັງໆ ໃນການທີ່ຂ້ອຍຖືກຈອງຈຳລ່າມໂສ້ໄວ້ຢູ່ພີ້ ກັບໃນ
ການຕອບໂຕ້ປົກປ້ອງເພື່ອຢືນຢັນຂ່າວປະເສີດ ດ້ວຍວ່າ ພວກເຈົ້າເປັນນ້ຳໜຶ່ງ
ໃຈດຽວກັນກັບຂ້ອຍ ໃນພຣະກະລຸນາທິຄຸນຂອງພຣະເຈົ້າ
1:8 ໂດຍພຣະເຈົ້າເປັນຫຼັກຖານພະຍານຂອງຂ້ອຍນີ້ ຂ້ອຍຄຶດຮອດພວກເຈົ້າໂດຍ
ໃຈເມດຕາກະລຸນາແບບຂອງ ພຣະເຢຊູຄຣິດ
1:9 ແລ້ວຂ້ອຍອະທິຖານເວົ້ານຳພຣະເຈົ້າເພື່ອພວກເຈົ້າ ວ່າ ຊິຈະເລີນຂຶ້ນຢ່າງຕໍ່-
ເນື່ອງ ໃນດ້ານຄວາມຮັກ ໃນດ້ານຄວາມອ້ອມຮູ້ ກັບໃນດ້ານການສັງເກດອອກ
ເຖິງແນວຜິດແນວຖືກ
1:10 ເພື່ອພວກເຈົ້າຊິເບິ່ງອອກພິສູດໄດ້ວ່າ ອີຫຍັງເປັນທີ່ປະເສີດກວ່າ ເພື່ອພວກ
ເຈົ້າຊິໄດ້ເປັນຄົນຈິງໃຈ ກັບບໍ່ມີອີຫຍັງເປັນທີ່ສະດຸດ ຈົນຮອດມື້ຂອງ ພຣະຄຣິດ
1:11 ກັບເປັນຄົນເຕັມລົ້ນດ້ວຍຜົນຂອງຄວາມຊອບທຳ ຊຶ່ງມີໂດຍທາງ ພຣະເຢຊູ-
ຄຣິດ ອັນເປັນທີ່ຖວາຍສະຫງ່າລາສີ ກັບເປັນທີ່ສັນລະເສີນພຣະເຈົ້າ
1:12 ບັດນີ້ ພີ່ນ້ອງ ເອີຍ ຂ້ອຍຢາກໃຫ້ພວກເຈົ້າຮູ້ກັນວ່າ ແນວບໍ່ດີທີ່ຂ້ອຍໂດນມາ
ນັ້ນ ໄດ້ກັບກາຍເປັນແນວດີເພື່ອການປະກາດຂ່າວປະເສີດອອກໄປອີກ
1:13 ຄືວ່າ ການທີ່ຂ້ອຍຖືກລ່າມໂສ້ໄວ້ເພື່ອ ພຣະຄຣິດ ນັ້ນ ໄດ້ປາກົດຢ່າງຊັດໃຫ້
ທະຫານ ໂຣມ ໜ່ວຍພິເສດນີ້ເຫັນ ພ້ອມທັງຄົນອື່ນໆ ນຳ
1:14 ແລ້ວບັດນີ້ ພີ່ນ້ອງໃນອົງພຣະຜູ້ເປັນເຈົ້າສ່ວນຫລາຍ ໄດ້ເກີດຄວາມໝັ້ນໃຈ
ຍ້ອນໂສ້ຂອງ ຂ້ອຍນີ້ ພວກເຂົາຈັ່ງປະກາດ ພຣະຄຳ ຂອງພຣະເຈົ້າຫລາຍຂຶ້ນ
ໂດຍບໍ່ຢ້ານ
1:15 ຄືຜູ້ລາງຄົນປະກາດເລື່ອງ ພຣະຄຣິດ ດ້ວຍໃຈອິດສາທຸ່ມຖຽງ ແຕ່ອີກຜູ້ລາງ
ຄົນໄດ້ປະກາດດ້ວຍໃຈຫວັງດີ
1:16 ຝ່າຍພວກກ່ອນນັ້ນທີ່ປະກາດເລື່ອງ ພຣະຄຣິດ ດ້ວຍການໂຕ້ຖຽງແຂ່ງດີ ບໍ່
ແມ່ນດ້ວຍໃຈຫວັງດີ ຄາດຢາກເພີ່ມຄວາມທຸກໃສ່ໂຕຂ້ອຍອີກ ທີ່ຖືກລ່າມໂສ້ໄວ້ນີ້

1:17 ແຕ່ຝ່າຍພວກທີ່ປະກາດດ້ວຍໃຈຮັກນັ້ນ ກໍຮູ້ກັນວ່າຂ້ອຍນີ້ໄດ້ຮັບການມອບ-
ໝາຍໄວ້ຈາກພຣະເຈົ້າເພື່ອຕອບໂຕ້ປົກປ້ອງຂ່າວປະເສີດ
1:18 ຄັນຈັ່ງຊັ້ນ ບໍ່ວ່າຄົນຊິປະກາດຈັ່ງໃດກໍຕາມ ຊິເປັນດ້ວຍການບໍ່ຫວັງດີ ຫລື
ດ້ວຍການຫວັງດີກໍຢ່າ ເລື່ອງ ພຣະຄຣິດ ໄດ້ຮັບການປະກາດທັງນັ້ນ ນີ້ເນາະມັນ
ເຮັດໃຫ້ຂ້ອຍມີໃຈສັນລະເສີນ ເອີ້ ມີໃຈສັນລະເສີນ *ພຣະເຈົ້າ*
1:19 ຄືຂ້ອຍຮູ້ຢູ່ວ່າ ການປະກາດນັ້ນຊິກັບກາຍມາຊ່ອຍຂ້ອຍໃຫ້ພົ້ນຈາກສະຖານ
ການນີ້  ໄດ້ຍ້ອນການອະທິຖານເວົ້ານຳພຣະເຈົ້າຂອງພວກເຈົ້າເພື່ອຂ້ອຍ ກັບໄດ້
ຍ້ອນການໜຸນໃຈຂອງ ພຣະວິນຍານ ຂອງ ພຣະເຢຊູຄຣິດ ນຳ
1:20 ເປັນຕາມຄວາມມຸ້ງຫວັງທີ່ຂ້ອຍຫວັງໄວ້ ຂ້ອຍຊິບໍ່ໄດ້ໂດນການອັບອາຍໃນ
ອີຫຍັງເລີຍ ແຕ່ຊິມີຄວາມກ້າຢູ່ສະເໝີຕາມເຄີຍ ເພື່ອວ່າ ໃນບັດນີ້  ພຣະເຢຊູ-
ຄຣິດ ຊິໄດ້ຮັບກຽດໂດຍໃນໂຕຂ້ອຍຢູ່ສະເໝີ  ບໍ່ວ່າຊິມີຊີວິດຫລືຊິຕາຍ
1:21 ຄືສຳລັບຂ້ອຍນີ້ ການທີ່ມີຊີວິດຢູ່ ກໍມີຊີວິດຢູ່ເພື່ອ ພຣະຄຣິດ  ແລ້ວການທີ່
ຕາຍນັ້ນ ກໍເປັນກຳໄລ
1:22 ແຕ່ຄັນຂ້ອຍຢູ່ໃນເນື້ອໜັງຕໍ່ອີກ ນີ້ກໍໝາຍຄວາມວ່າ ຂ້ອຍກໍຊິໄດ້ຜົນງານອີກ
ແຕ່ຊິໃຫ້ເລືອກທາງໃດ ຂ້ອຍບອກບໍ່ຖືກ
1:23 ຄືຂ້ອຍລັງເລໃຈຢູ່ໃນລະຫວ່າງສອງແນວນີ້ ຄືວ່າຂ້ອຍຢາກອອກຈາກໂລກນີ້
ໄປຢູ່ກັບ ພຣະຄຣິດ ຊຶ່ງປະເສີດກວ່າ
1:24 ແຕ່ ຄັນຂ້ອຍຍັງຢູ່ໃນເນື້ອໜັງນີ້ ກໍຈຳເປັນກວ່າ ສຳລັບພວກເຈົ້າ
1:25 ແລ້ວຂ້ອຍໝັ້ນໃຈວ່າ ຂ້ອຍຄົງຊິຢູ່ຕໍ່ໄປອີກ  ເອີ້ ຄືຢູ່ນຳພວກເຈົ້ານີ້ ເພື່ອພວກ
ເຈົ້າຊິມີຄວາມຈະເລີນກ້າວໜ້າ ກັບຄວາມປິຕິຍິນດີໃນຄວາມເຊື່ອ
1:26 ເພື່ອຄວາມຍົກຍ້ອງສັນລະເສີນຂອງພວກເຈົ້າຊິທະວີຫລາຍຂຶ້ນໃນ ພຣະເຢ-
ຊູຄຣິດ ທາງຂ້ອຍ ບັດຂ້ອຍມາຫາພວກເຈົ້າອີກ
1:27 ຂໍແຕ່ວ່າ ໃຫ້ພຶດຕິກຳຂອງຊີວິດພວກເຈົ້າສົມກັບຂ່າວປະເສີດຂອງ ພຣະ-
ຄຣິດ ນັ້ນ ເພື່ອວ່າແມ່ນແຕ່ຂ້ອຍຊິມາຫາພວກເຈົ້າຫລືບໍ່ກໍຕາມ ຂ້ອຍກໍຊິຮັບຂ່າວ
ວ່າ ພວກເຈົ້າຕັ້ງໝັ້ນຢູ່ ເປັນນໍ້າໜຶ່ງໃຈດຽວກັນ ຮ່ວມເປັນອັນໜຶ່ງດຽວກັນໃນການ
ພະຍາຍາມເພື່ອຄວາມເຊື່ອໃນຂ່າວປະເສີດນັ້ນ

1:28 ແລ້ວບໍ່ໃຫ້ຢ້ານຝ່າຍກົງກັນຂ້າມເລີຍ ທີ່ຂັດຂວາງພວກເຈົ້າໄວ້ ຊຶ່ງຄວາມກ້າ
ຂອງພວກເຈົ້ານັ້ນ ໄດ້ບົ່ງຊີ້ເຖິງຄວາມພິນາດຂອງເຂົາ ແຕ່ຝ່າຍພວກເຈົ້າກໍໄດ້
ບົ່ງຊີ້ເຖິງຄວາມລອດພົ້ນຂອງພວກເຈົ້າ ຊຶ່ງຄວາມພົ້ນນັ້ນມາຈາກພຣະເຈົ້າ
1:29 ຍ້ອນວ່າ *ພຣະເຈົ້າ* ບໍ່ໄດ້ໂຜດໃຫ້ພວກເຈົ້າເຊື່ອໃນ ພຣະເຢຊູຄຣິດ ຢ່າງດຽວ
ແຕ່ໂຜດໃຫ້ພວກເຈົ້າທົນຄວາມທຸກຍາກເພື່ອເພິ່ນນຳ
1:30 ຄືພວກເຈົ້າພວມມີຄວາມລັງເລທາງດຽວກັນທີ່ເຄີຍເຫັນໃນຊີວິດຂອງໂຕ
ຂ້ອຍ ຕອນໄດ້ຍິນວ່າໂຕຂ້ອຍພວມລັງເລຢູ່

## ຟີລິບປອຍ ບົດທີ 2

2:1 ຈັ່ງຊັ້ນ ຄັນມີການອົບອຸ່ນໝຸນໃຈໃນ ພຣະຄຣິດ ຫລືການປອບໂຍນໂດຍ
ຄວາມຮັກ ຫລືຄວາມສາມັກຄີກັນໂດຍໃນ ພຣະວິນຍານ ຫລືການຮັກແພງອີຕົນ
ເຫັນອົກເຫັນໃຈກັນ
2:2 ຈັ່ງຂໍພວກເຈົ້າຊ່ອຍເສີມຄວາມປິຕິຍິນດີຂອງຂ້ອຍໃຫ້ເຕັມປ່ຽມເດີ້ ໂດຍມີ
ຄວາມນຶກຄຶດແບບດຽວກັນ ມີຄວາມຮັກແພງຢ່າງດຽວກັນ ເປັນນ້ຳໜຶ່ງໃຈດຽວ
ກັນ ມີຄວາມພ້ອມພຽງຢ່າງດຽວກັນ
2:3 ແລ້ວບໍ່ຄວນຊິເຮັດອີຫຍັງໂດຍການທຸ່ມຖຽງກັນ ຫລືອວດດີ ຫລືຫາຍົດຫາກຽດ
ໃຫ້ເຈົ້າຂອງ ແຕ່ວ່າຄວນຊິນ້ອມໜ້າມີໃຈຖ່ອມຊຶ່ງກັນແລະກັນ ຖືກັນວ່າຄົນອື່ນ
ດີກວ່າໂຕເອງ
2:4 ແລ້ວບໍ່ໃຫ້ເຫັນແກ່ຜົນປະໂຫຍດຂອງໂຕເອງຝ່າຍດຽວເດີ້ ແຕ່ໃຫ້ເຫັນແກ່ຜົນ
ປະໂຫຍດຂອງຜູ້ອື່ນນຳ
2:5 ຄືໃຫ້ພວກເຈົ້າມີຄວາມນຶກຄຶດໃນໂຕເຈົ້າ ຄືກັນກັບມີຢູ່ໃນອົງ ພຣະເຢຊູຄຣິດ
ເດີ້
2:6 ຜູ້ເພິ່ນມີລັກສະນະພາບເປັນພຣະເຈົ້າ ຈັ່ງບໍ່ໄດ້ຖືວ່າມັນເປັນການລຸກລ້ຳກ້າວ-
ກ່າຍທີ່ຊິເທົ່າທຽມກັບພຣະເຈົ້າ
2:7 ແຕ່ໄດ້ວາງສະພາວະ *ຂອງ* ເພິ່ນນັ້ນໄວ້ ຮັບເອົາສະພາບເປັນຂ້າທາດຮັບໃຊ້
ລົງມາໃນຮູບແບບເປັນໂຕຄົນ

2:8 ແລ້ວໃນສະພາບເປັນໂຕຄົນນັ້ນ ເພິ່ນໄດ້ຖ່ອມໂຕລົງ ແມ່ນແຕ່ເຊື່ອຟັງເຖິງ
ຕາຍກໍຍັງຍອມ ເອີ້ ຕາຍເທິງໄມ້ກາງແຂນນັ້ນ
2:9 ເປັນເຫດທີ່ພຣະເຈົ້າໄດ້ຍົກເພິ່ນໄວ້ໃນຕຳແໜ່ງຢ່າງສູງສຸດ ຄືໃຫ້ເພິ່ນມີພຣະ-
ນາມເໜືອນາມອື່ນທັງປວງ
2:10 ເພື່ອ ໃນພຣະນາມຂອງ ພຣະເຢຊູ ນັ້ນ ຄູ່ຫົວເຂົ່າໃນສະຫວັນກໍດີ ເທິງແຜ່ນ-
ດິນໂລກກໍດີ ພ້ອມຢູ່ໃຕ້ພື້ນແຜ່ນດິນໂລກກໍດີ ຊິໄດ້ຂາບລົງຕໍ່ເພິ່ນທັງໝົດ
2:11 ແລ້ວ ເພື່ອຄູ່ລີ້ນຊິຍອມຮັບວ່າ ພຣະເຢຊູຄຣິດ ເປັນອົງພຣະຜູ້ເປັນເຈົ້າ ຊຶ່ງ
ເປັນທີ່ຖວາຍພຣະກຽດແດ່ພຣະເຈົ້າຜູ້ເປັນພໍ່
2:12 ຈັ່ງຊັ້ນ ພີ່ນ້ອງທີ່ຮັກ ເອີຍ ຕາມທີ່ພວກເຈົ້າເຄີຍເຊື່ອຟັງຂ້ອຍຢູ່ສະເໝີນັ້ນ ບໍ່
ວ່າຍາມຂ້ອຍຢູ່ນຳຫລືບໍ່ໄດ້ຢູ່ນຳ ຈັ່ງຊັ້ນພະຍາຍາມໃຫ້ຜົນຄວາມພົ້ນຂອງພວກ
ເຈົ້າປາກົດອອກ ດ້ວຍການເຄົາລົບຢ້ານຢໍ້າຈົນໂຕສັ່ນ ບັດຂ້ອຍບໍ່ໄດ້ຢູ່ນຳເດີ້
2:13 ຍ້ອນວ່າ ແມ່ນພຣະເຈົ້າເອງ ທີ່ເຮັດໃນໃຈຂອງພວກເຈົ້າ ເພື່ອມີຄວາມປາດ-
ຖະໜາ ທັງມີຄວາມສາມາດ ເກີດຜົນຕາມພຣະປະສົງອັນຄວນພໍໃຈຂອງເພິ່ນ
2:14 ຈັ່ງຊັ້ນ ໃຫ້ເຮັດໝົດຄູ່ອັນຄູ່ແນວໂດຍບໍ່ມີສຽງຈົ່ມພຶມພຳຫລືການທຸ່ມຖຽງກັນ
ເດີ້
2:15 ເພື່ອພວກເຈົ້າຊິເປັນຜູ້ບໍລິສຸດບໍ່ມີທີ່ຈັບຜິດໄດ້ ບໍ່ມີພິດມີໄພອິຫຍັງເລີຍ ຄື
ເປັນລູກໆ ຂອງພຣະເຈົ້າທີ່ບໍ່ມີທີ່ຕິ ຢູ່ຫວ່າງກາງຍຸກຄົດໂກງເສື່ອມຊາມນີ້ ຊຶ່ງເຂົາ
ພວມມອງພວກເຈົ້າວ່າເປັນດວງສະຫວ່າງຢູ່ໃນໂລກ
2:16 ໂດຍການຖືເອົາຍົກ ພຣະຄຳ ແຫ່ງຊີວິດໄວ້ໃຫ້ໝັ້ນ ເພື່ອຂ້ອຍຊິມີແນວຍົກ-
ຍ້ອງໃນມື້ຂອງ ພຣະຄຣິດ ທີ່ຊິມານັ້ນ ວ່າຂ້ອຍບໍ່ໄດ້ແລ່ນແຂ່ງ ຫລືຮັບໃຊ້ *ພຣະ-
ເຈົ້າ* ຢ່າງຫວ່າງບໍ່ຊື່ໆ
2:17 ເອີ້ ຄັ່ນຂ້ອຍຊິຕ້ອງຖືກເທຊີວິດອອກເທິງແທ່ນບູຊາ ອຸທິດເປັນເຄື່ອງຖວາຍ
ຍ້ອນການຮັບໃຊ້ກັບການເສຍສະລະເພື່ອຄວາມເຊື່ອຂອງພວກເຈົ້ານັ້ນ ຂ້ອຍກໍ
ຍັງດີໃຈ ມີຄວາມຊົມຊື່ນຍິນດີນຳພວກເຈົ້າ ໂລດ
2:18 ແລ້ວໃນແນວດຽວກັນ ພວກເຈົ້າກໍຄວນຊິຊົມຊື່ນຍິນດີກັບຂ້ອຍນຳ

2:19 ແຕ່ຂ້ອຍຍັງຫວັງໃຈໃນ ພຣະເຢຊູເຈົ້າ ວ່າ ໃນເວລາບໍ່ໂດນ ຂ້ອຍວ່າຊິໃຊ້ ຕີ-
ໂມທຽວ ໄປຫາພວກເຈົ້າ ເພື່ອຂ້ອຍຊິມີແຮງໃຈແໜ່ ບັດພໍຂ້ອຍຮູ້ຂ່າວສະຖານະ-
ການຂອງພວກເຈົ້າ
2:20 ຍ້ອນວ່າ ຂ້ອຍບໍ່ມີໃຜນອກຈາກ ຕີໂມທຽວ ທີ່ມີນ້ຳໃຈມີຄວາມນຶກຄຶດຄືກັນກັບ
ຂ້ອຍ ທີ່ຊິເບິ່ງແຍງພວກເຈົ້າຢ່າງຈິງໃຈ
2:21 ຍ້ອນວ່າ ຄູ່ຄົນຕ່າງຊອກຫາຜົນປະໂຫຍດຂອງໂຕເອງ ບໍ່ແມ່ນຜົນປະໂຫຍດ
ຂອງ ພຣະເຢຊູຄຣິດ
2:22 ແຕ່ວ່າ ພວກເຈົ້າກໍຮູ້ວ່າ ຕີໂມທຽວ ໄດ້ພິສູດໂຕເອງແລ້ວ ວ່າເຂົາໄດ້ຮັບໃຊ້
ຮ່ວມກັບຂ້ອຍໃນການປະກາດຂ່າວປະເສີດ ຄືກັນກັບລູກຊາຍຮັບໃຊ້ພໍ່
2:23 ຈັ່ງຊັ້ນ ຂ້ອຍຫວັງວ່າຊິໃຊ້ ລາວ ໄປຫາພວກເຈົ້າໃນໄວໆ ນີ້ ພໍເຫັນວ່າການ
ງານຂອງຂ້ອຍຊິເປັນໄປແນວໃດຢູ່ທາງນີ້
2:24 ແຕ່ຂ້ອຍມີຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າວ່າ ໃນບໍ່ຊ້າບໍ່ໂດນຂ້ອຍເອງຊິ
ໄດ້ມາຫາພວກເຈົ້ານຳ
2:25 ຈັ່ງໃດກໍຕາມ ຂ້ອຍເຫັນວ່າ ຈຳເປັນທີ່ຊິໃຊ້ ເອປາໂຟດີໂຕ ມາຫາພວກເຈົ້າ
ກ່ອນ ຊຶ່ງຜູ້ນີ້ເປັນພີ່ນ້ອງຜູ້ຮ່ວມໃນການງານນຳຂ້ອຍ ເປັນໝູ່ປະກາດຂ່າວໃຫ້
ພວກເຈົ້າ ກັບໄດ້ຮັບໃຊ້ຂ້ອຍໃນຍາມທີ່ຂ້ອຍທຸກຍາກລຳບາກ
2:26 ໂດຍວ່າ ຜູ້ຄຶດຮອດພວກເຈົ້າໝົດຄູ່ຄົນ ແລ້ວເປັນຫ່ວງພວກເຈົ້າຫລາຍ ຍ້ອນ
ພວກເຈົ້າໄດ້ຂ່າວວ່າຜູ້ປ່ວຍ
2:27 ແທ້ຈິງແລ້ວ ລາວ ໄດ້ປ່ວຍເກືອບຕາຍອີຫລີ ແຕ່ພຣະເຈົ້າໄດ້ໂປດເມດຕາ
ລາວ ແລ້ວບໍ່ແມ່ນເມດຕາແຕ່ຜູ້ຜູ້ດຽວ ແຕ່ໄດ້ເມດຕາໂຕຂ້ອຍນຳ ເພື່ອບໍ່ໃຫ້ຂ້ອຍ
ເປັນທຸກຊ້ອນທຸກ
2:28 ຈັ່ງຊັ້ນ ຂ້ອຍວ່າ ສົມຄວນທີ່ຊິໃຊ້ ລາວ ໄປ ເພື່ອບັດຍາມພວກເຈົ້າເຫັນ ລາວ
ອີກ ພວກເຈົ້າຈັ່ງຊິດີໃຈຫລາຍ ແລ້ວຄວາມທຸກໃຈຂອງຂ້ອຍກໍຊິເບົາບາງລົງນຳ
2:29 ຈັ່ງຊັ້ນ ຂໍໃຫ້ພວກເຈົ້າຕ້ອນຮັບ ລາວ ໄວ້ໃນ *ພຣະນາມຂອງ* ອົງພຣະຜູ້ເປັນ-
ເຈົ້າດ້ວຍຄວາມ ຍິນດີຢ່າງເຕັມປ່ຽມເດີ້ ແລ້ວຈັ່ງໃຫ້ກຽດຄົນແນວນີ້ໄວ້ຢ່າງສູງເດີ້

2:30 ຍ້ອນວ່າ ລາວ ເກືອບຕາຍເພື່ອການງານຂອງ ພຣະຄຣິດ ຄື ລາວ ໄດ້ສ່ຽງຊີ-
ວິດຂອງໂຕເອງເພື່ອຊິໄດ້ຊ່ອຍໃນແນວທີ່ຍັງຂາດໃນການຮັບໃຊ້ຂອງພວກເຈົ້າຕໍ່
ຂ້ອຍ

## ຟີລິບປອຍ ບົດທີ 3

3:1 ສຸດທ້າຍນີ້ ພີ່ນ້ອງຂອງຂ້ອຍ ເອີຍ ໃຫ້ຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າເດີ້
ການທີ່ຂ້ອຍຂຽນຂໍ້ຄວາມເຫລົ່ານີ້ເຖິງພວກເຈົ້າຊໍ້າອີກ ຂ້ອຍກໍບໍ່ໄດ້ລຳບາກຈັກ-
ໜ່ອຍເລີຍ ຍ້ອນວ່າມັນຊ່ອຍໃຫ້ພວກເຈົ້າຢູ່ໃນຄວາມປອດໄພ
3:2 ໃຫ້ລະວັງພວກໝາຮ້າຍເດີ້ ລະວັງພວກຄົນງານຊົ່ວເດີ້ ກັບລະວັງພວກຖືພິທີ-
ຕັດເດີ້
3:3 ຍ້ອນວ່າ ພວກເຮົາເອງເປັນພວກທີ່ຖືພິທີເຂົ້າພິທີຕັດຢ່າງຖືກຕ້ອງ ຄືແມ່ນ
ພວກຜູ້ທີ່ນະມັດສະການພຣະເຈົ້າຝ່າຍຈິດວິນຍານ ຊຶ່ງພວກເຮົາຍົກຍ້ອງໃນອົງ
ພຣະເຢຊູຄຣິດ ແລ້ວບໍ່ໄດ້ໄວ້ໃຈໃນແນວຕ່າງໆ ຝ່າຍເນື້ອໜັງເລີຍ
3:4 ແມ່ນແຕ່ ຄັນຜູ້ອື່ນຄຶດວ່າເຂົາ ອາດ ມີເຫດທີ່ຊິໄວ້ໃຈໃນການງານຝ່າຍເນື້ອໜັງ
ຂ້ອຍກໍຍັງມີເຫດທີ່ຊິໄວ້ໃຈໃນເນື້ອໜັງຫລາຍກວ່າເຂົາອີກ
3:5 ຄືຂ້ອຍໄດ້ຮັບເຂົ້າພິທີຕັດໃນມື້ທີ່ແປດນັ້ນ ຂ້ອຍເປັນຊົນຊາດ ອິສະຣາເອນ
ໂດຍແທ້ ເປັນເຜົ່າຕະກູນ ເບັນຢາມິນ ເປັນຄົນເຮັບເຣີເກີດໃນເຊື້ອສາຍຊາວ
ເຮັບເຣີ ໃນດ້ານກົດບັນຍັດນັ້ນ ໄດ້ຢູ່ໃນຄະນະ ຟາຣີຊາຍ
3:6 ໃນດ້ານຄວາມກະຕືລືລົ້ນ ຂ້ອຍກໍໄດ້ຂົ່ມເຫງກຸ່ມຜູ້ເຊື່ອ ໃນດ້ານຄວາມຊອບ-
ທຳຕາມຫລັກຂໍ້ກົດບັນຍັດນັ້ນ ກໍບໍ່ມີໜ້ອງຫາຈັບຜິດໄດ້ເລີຍ
3:7 ຈັ່ງໃດກໍດີ ແນວໃດທີ່ເຄີຍຖືວ່າ ເປັນທ່ານປະໂຫຍດສຳລັບຂ້ອຍ ບັດນີ້ຂ້ອຍຖື
ວ່າແນວໝູ່ນັ້ນບໍ່ເປັນປະໂຫຍດແລ້ວ ຍ້ອນເຫັນແກ່ ພຣະຄຣິດ
3:8 ທີ່ຈິງຂ້ອຍຖືວ່າສິ່ງສາລະພັດນັ້ນບໍ່ປະໂຫຍດ ຍ້ອນເຫັນແກ່ຄວາມປະເສີດ
ຂອງຄວາມຮູ້ເຖິງ ພຣະເຢຊູຄຣິດ ອົງພຣະຜູ້ເປັນເຈົ້າຂອງຂ້ອຍ ຄືຍ້ອນເພິ່ນ
ຂ້ອຍຈັ່ງໄດ້ສະລະຖິ້ມຄູ່ອັນຄູ່ແນວ ກັບຖືວ່າ ແນວໝູ່ນັ້ນເປັນຂອງ ເສດ ທີ່ບໍ່ມີສາ-
ລະ ເພື່ອຂ້ອຍຊິໄດ້ ພຣະຄຣິດ

3:9 ແລ້ວຈັ່ງພົ້ວ່າຂ້ອຍຢູ່ໃນເພິ່ນ ໂດຍບໍ່ມີຄວາມຊອບທຳຂອງໂຕເອງຊຶ່ງໄດ້ທາງ
ກົດບັນຍັດ ແຕ່ມີຄວາມຊອບທຳໂດຍຄວາມເຊື່ອໃນ ພຣະຄຣິດ ທີ່ເປັນຄວາມ
ຊອບທຳຊຶ່ງມາຈາກພຣະເຈົ້າໂດຍຄວາມເຊື່ອ
3:10 ເພື່ອຂ້ອຍຊິໄດ້ຮູ້ຈັກກັບເພິ່ນ ກັບລິດອຳນາດຂອງເພິ່ນໃນການເປັນຂຶ້ນມາ
ຈາກຕາຍ ກັບຮ່ວມສາມັກຄີໃນຄວາມທຸກຂອງເພິ່ນ ຈັ່ງໄດ້ຖືກຮັບເຂົ້າຮ່ວມໃນ
ຄວາມຕາຍຂອງເພິ່ນ
3:11 ຄັ່ນວ່າ ໂດຍວິທີໜຶ່ງວິທີໃດຂ້ອຍຈັ່ງຊິໄດ້ເປັນຂຶ້ນມາຈາກຄວາມຕາຍນຳ
3:12 ບໍ່ແມ່ນວ່າຂ້ອຍໄດ້ *ຮອດເສັ້ນໄຊ* ແລ້ວ ຫລືສຳເລັດແລ້ວ ແຕ່ຂ້ອຍພວມມຸ້ງ
ໜ້າຄວ້າເອົາໃນແນວທີ່ ພຣະເຢຊູຄຣິດ ໄດ້ຄວ້າເອົາໂຕຂ້ອຍມາແລ້ວນັ້ນ
3:13 ພີ່ນ້ອງ ເອີຍ ຂ້ອຍບໍ່ຖືວ່າຂ້ອຍໄດ້ຄວ້າເອົາ *ເສັ້ນໄຊ* ນັ້ນໄດ້ແລ້ວ ແຕ່ຂ້ອຍ
ເຮັດຢ່າງໜຶ່ງ ຄືລືມແນວທີ່ຜ່ານພົ້ນມາແລ້ວຊະ ກັບໂນ້ມໂຕອອກໄປຍັງແນວທີ່ຢູ່
ທາງໜ້າ
3:14 ຂ້ອຍພວມມຸ້ງໜ້າໄປສູ່ເປົ້າໝາຍນັ້ນ ຄືລາງວັນຢູ່ທີ່ສູງຕາມທີ່ພຣະເຈົ້າໄດ້
ເອີ້ນມາໂດຍໃນ ພຣະເຢຊູຄຣິດ
3:15 ຈັ່ງຊັ້ນ ໃຫ້ພວກເຮົາ ຊຶ່ງເປັນຜູ້ໃຫຍ່ແລ້ວ ມີຄວາມນຶກຄຶດແນວດຽວກັນນັ້ນ
ກັບວ່າ ຄັ່ນມີໃຜໃນພວກເຈົ້າມີຄວາມນຶກຄຶດຕ່າງກັນ ພຣະເຈົ້າກໍຊິເປີດເຜີຍໃຫ້
ກັບເຈົ້ານຳ
3:16 ມີແຕ່ວ່າ ພວກເຮົາໄດ້ມຸ້ງໜ້າຮອດສ່ຳໃດແລ້ວ ກໍໃຫ້ພວກເຮົາດຳເນີນຕາມ
ເກນນັ້ນຕໍ່ໄປ
3:17 ພີ່ນ້ອງ ເອີຍ ໃຫ້ພວກເຈົ້າເອົາແບບຕາມຢ່າງຂ້ອຍເດີ້ ກັບໃຫ້ຄ່ອຍສັງເກດຜູ້
ອື່ນໆ ທີ່ຢູ່ຢ່າງດຽວກັນ ຕາມແບບຢ່າງນັ້ນທີ່ພວກເຮົາໃຫ້ໄວ້ແລ້ວ
3:18 ຍ້ອນວ່າ ຕາມທີ່ຂ້ອຍເຄີຍເຕືອນພວກເຈົ້າມາຫລາຍເທື່ອ ແລ້ວຍັງເຕືອນຢູ່
ທັນທີອີກດ້ວຍນ້ຳຕາໄຫລ ວ່າມີຫລາຍຄົນທີ່ດຳເນີນຊີວິດຢູ່ຢ່າງເປັນສັດຕູຕໍ່ໄມ້-
ກາງແຂນຂອງ ພຣະຄຣິດ

3:19 ຊຶ່ງປາຍທາງຂອງຄົນພວກນັ້ນຄືຄວາມພິນາດ ກັບວ່າທ້ອງໂຕເອງເປັນພະ
ຂອງເຂົາ ກັບຄວາມອັບອາຍເປັນແນວໂອ້ອວດຂອງເຂົາ ແລ້ວພວກເຂົາຈັ່ງນຶກ
ຄຶດແຕ່ໃນທາງຂອງໂລກນີ້
3:20 ແຕ່ຝ່າຍພວກເຮົານີ້ ໄດ້ຖືສັນຊາດສະຫວັນແລ້ວ ຊຶ່ງພວກເຮົາຄອຍຖ້າພຣະ-
ຜູ້ໂຜດໃຫ້ລອດພົ້ນນັ້ນ ຄືພຣະເຢຊູຄຣິດເຈົ້າ
3:21 ຊຶ່ງເພິ່ນເອງເປັນຜູ້ທີ່ຊິປ່ຽນແປງໂຕອະນິຈັງອັນຕ່ຳຕ້ອຍຂອງພວກເຮົາໃຫ້-
ເປັນແນວໃໝ່ ຄືກັນກັບໂຕຂອງເພິ່ນທີ່ປະກອບດ້ວຍສະຫງ່າລາສີ ຕາມລິດອຳ-
ນາດຂອງເພິ່ນນັ້ນ ທີ່ເພິ່ນສາມາດເຮັດໃຫ້ຄູ່ອັນຄູ່ແນວຢູ່ໃຕ້ການປົກຄອງຂອງ
ເພິ່ນ

# ຟີລິບປອຍ ບົດທີ 4

4:1 ຈັ່ງຊັ້ນ ພີ່ນ້ອງຜູ້ເປັນທີ່ຮັກຂອງຂ້ອຍ ເອີຍ ທີ່ຂ້ອຍຄຶດຮອດຫລາຍ ເປັນທີ່ຍິນ-
ດີ ກັບເປັນມົງກຸດຂອງຂ້ອຍນຳ ພວກທີ່ຮັກຂອງຂ້ອຍ ເອີຍ ໃຫ້ຢືນໝັ້ນໃນອົງ-
ພຣະຜູ້ເປັນເຈົ້າເດີ້
4:2 ຂ້ອຍຂໍເຕືອນ ນາງ ຢູໂອເດຍ ກັບ ນາງ ຊິນຕີເຂ ໃຫ້ມີຄວາມນຶກຄຶດປອງດອງ
ກັນໃນອົງພຣະຜູ້ເປັນເຈົ້າຊະ
4:3 ເອີ້ ຂ້ອຍຂໍຮ້ອງເຈົ້ານຳແໜ່ ຜູ້ເປັນໝູ່ຮ່ວມແອກທີ່ແທ້ນຳຂ້ອຍ ໃຫ້ເຈົ້າຊ່ອຍ
ແມ່ຍິງສອງຄົນນັ້ນແໜ່ ຄືພວກເຂົາເຄີຍເຮັດການງານໃນຂ່າວປະເສີດນຳກັນກັບ
ຂ້ອຍ ພ້ອມກັບ ກະເລເມ ນຳ ທັງຄົນອື່ນໆ ທີ່ເປັນໝູ່ຮ່ວມງານຂອງຂ້ອຍ ຊຶ່ງຊື່
ຂອງພວກເຂົານັ້ນມີຢູ່ໃນໜັງສືແຫ່ງຊີວິດແລ້ວ
4:4 ໃຫ້ຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າຢູ່ສະເໝີ ຂ້ອຍຂໍເວົ້າຊ້ຳອີກວ່າ ໃຫ້ຊົມ-
ຊື່ນຍິນດີເດີ້
4:5 ໃຫ້ຄູ່ຄົນເຫັນຄວາມອ່ອນສຸພາບຂອງເຈົ້າເດີ້ ຄືອົງພຣະຜູ້ເປັນເຈົ້າໄດ້ຢູ່ໃກ້
ແລ້ວ
4:6 ແລ້ວຢ່າກະວົນກະວາຍໃນເລື່ອງອີຫຍັງເດີ້ ແຕ່ໃຫ້ບອກຄວາມຕ້ອງການຂອງ
ເຈົ້າຄູ່ແນວຕໍ່ພຣະເຈົ້າ ດ້ວຍການອະທິຖານ ການວິງວອນ ກັບການຂອບຄຸນເດີ້

4:7 ແລ້ວສັນຕິພາບຂອງພຣະເຈົ້າ ຊຶ່ງເກີນກວ່າທີ່ຊິເຂົ້າໃຈໄດ້ ຊິຄຸ້ມຄອງຈິດໃຈ
ກັບຄວາມນຶກຄຶດຂອງເຈົ້າໄວ້ໃນ ພຣະເຢຊູຄຣິດ
4:8 ພີ່ນ້ອງ ເອີຍ ໃນສຸດທ້າຍນີ້ ແນວໃດທີ່ເປັນຄວາມຈິງ ແນວໃດທີ່ດີງາມເປັນຕາ
ນັບຖື ແນວໃດທີ່ຍຸດຕິທຳ ແນວໃດທີ່ບໍລິສຸດ ແນວໃດທີ່ເປັນຕາຮັກແພງ ແນວໃດ
ທີ່ເປັນຕາພັງ ຄືຄັ່ນມີແນວໃດທີ່ລ້ຳເລີດ ແນວໃດທີ່ເປັນຕາຍົກຍ້ອງສັນລະເສີນ ກໍ
ໃຫ້ຄຶດໃນແນວໝູ່ນີ້ເດີ້
4:9 ແລ້ວແນວທີ່ເຈົ້າໄດ້ຮຽນຮູ້ ກັບໄດ້ຮັບໄວ້ ກັບໄດ້ຍິນ ກັບໄດ້ເຫັນໃນໂຕຂ້ອຍ
ແລ້ວ ກໍໃຫ້ເຮັດຕາມແນວໝູ່ນີ້ ແລ້ວພຣະເຈົ້າຂອງສັນຕິພາບກໍຊິຢູ່ນຳພວກເຈົ້າ
4:10 ແຕ່ຂ້ອຍຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າຢ່າງສຸດລຶກ ດ້ວຍວ່າໃນທີ່ສຸດ
ຄວາມຄຶດຮອດພວກເຈົ້າຕໍ່ຂ້ອຍໄດ້ຟື້ນມາອີກແລ້ວ ຄືແມ່ນແຕ່ຄຶດຮອດຂ້ອຍອີ-
ຫລີ ພວກເຈົ້າກໍຍັງຂາດໂອກາດຊື່ໆ
4:11 ທີ່ຂ້ອຍເວົ້ານີ້ ກໍບໍ່ໄດ້ເວົ້າເຖິງເລື່ອງຄວາມຕ້ອງການຂອງໂຕເອງດອກ ຄື
ຂ້ອຍຮຽນຮູ້ມາແລ້ວວ່າ ຂ້ອຍຢູ່ໃນສະຖານະການໃດ ກໍພໍໃຈຢູ່ໃນສະຖານະການ
ນັ້ນ
4:12 ຄືຂ້ອຍຮູ້ຈັກການຢູ່ຢ່າງຕົກຕ່ຳ ແລ້ວກໍຮູ້ຈັກການຢູ່ຢ່າງເຫລືອລົ້ນນຳ ຄື
ຂ້ອຍຮຽນຮູ້ເຖິງເຄດລັບໃນຄູ່ສະຖານະການມາແລ້ວ ບໍ່ວ່າຊິເປັນການອີ່ມໜຳ
ການຫິວໂຫຍ ການຢູ່ຢ່າງເຫລືອລົ້ນ ຮ່ວມກັນທັງການທຸກຍາກລຳບາກ ຂ້ອຍກໍຢູ່
ໄດ້ ໂລດ
4:13 ຄືຂ້ອຍສາມາດເຮັດຄູ່ແນວໄດ້ໂດຍໃນ ພຣະຄຣິດ ຜູ້ເພິ່ນເສີມກຳລັງໃຫ້ຂ້ອຍ
4:14 ຈັ່ງໃດກໍດີ ພວກເຈົ້າໄດ້ເຮັດດີຢູ່ແລ້ວ ທີ່ວ່າໄດ້ມີສ່ວນຮ່ວມຊ່ອຍໃນຍາມທຸກ
ຂອງຂ້ອຍ
4:15 ແລ້ວພວກເຈົ້າເອງ ຊາວ ຟີລິບປອຍ ເອີຍ ໄດ້ຮູ້ຢູ່ແລ້ວວ່າ ຕອນເລີ່ມອອກໄປ
ປະກາດຂ່າວປະເສີດນັ້ນ ຄືຕອນຂ້ອຍອອກຈາກແຄວ້ນ ມາເກໂດເນຍ ໄປ ບໍ່ມີ
ກຸ່ມຜູ້ເຊື່ອໃດໆ ມີສ່ວນຮ່ວມກັບຂ້ອຍໃນການຖວາຍກັບການຮັບຊ່ອຍເລີຍ ນອກ
ຈາກພວກເຈົ້າພວກດຽວເທົ່ານັ້ນ

4:16 ຄື ແມ່ນແຕ່ຕອນຂ້ອຍຢູ່ໃນເມືອງ ເທຊະໂລນິກ ພວກເຈົ້າກໍຍັງຝາກຂອງ
ຖວາຍມາຢູ່ຫລາຍເທື່ອ ເພື່ອຊ່ອຍເບົາບາງຄວາມທຸກຍາກລຳບາກຂອງຂ້ອຍ
4:17 ບໍ່ແມ່ນວ່າຂ້ອຍຊອກຢາກຮັບອີຫຍັງດອກ ແຕ່ວ່າຂ້ອຍຢາກໃຫ້ເຈົ້າໄດ້ຜົນ
ກຳໄລໃນບັນຊີຂອງພວກເຈົ້າໃຫ້ຫລາຍຂຶ້ນ
4:18 ແຕ່ຂ້ອຍມີຂອງຄົບແລ້ວ ຄືມີເຫລືອລົ້ນແລ້ວ ຂ້ອຍອີ່ມໜຳຍ້ອນໄດ້ຮັບຂອງທີ່
ເອປາໂຟດີໂຕ ໄດ້ນຳມາຈາກພວກເຈົ້າ ເປັນກິ່ນຫອມ ເປັນເຄື່ອງບູຊາທີ່ພຣະ-
ເຈົ້າຄວນພໍໃຈຫລາຍ
4:19 ແລ້ວພຣະເຈົ້າຂອງຂ້ອຍຊິໂຜດປະທານໝົດຄູ່ແນວ ຕາມທີ່ເຈົ້າຕ້ອງການ
ຕາມຊັບທີ່ເພິ່ນມີຢ່າງບໍ່ຮູ້ຈັກໝົດໃນສະຖານອັນຮຸ່ງເຮືອງ ໂດຍໃນ ພຣະເຢຊູ-
ຄຣິດ
4:20 ບັດນີ້ ຂໍໃຫ້ສະຫງ່າລາສີມີແດ່ພຣະເຈົ້າຜູ້ເປັນພໍ່ຂອງພວກເຮົາສືບໆ ໄປເປັນ
ນິດ ອາເມນ
4:21 ຂ້ອຍຂໍຝາກຄວາມຄິດຮອດ ມາເຖິງພີ່ນ້ອງຄົນຂອງພຣະເຈົ້າຄູ່ຄົນໃນ ພຣະ-
ເຢຊູຄຣິດ ແລ້ວພີ່ນ້ອງທີ່ຢູ່ກັບຂ້ອຍນີ້ໄດ້ຝາກຄວາມຄິດຮອດມາຍັງພວກເຈົ້າ
ນຳ
4:22 ແລ້ວຄົນຂອງພຣະເຈົ້າຄູ່ຄົນ ຂໍຝາກຄວາມຄິດຮອດມາທັກທາຍພວກເຈົ້ານຳ
ແມ່ນສະເພາະພວກພີ່ນ້ອງຢູ່ໃນສຳນັກຂອງຈັກກະພັດ ກາຍຊາ
4:23 ຂໍໃຫ້ຮົ່ມພຣະກະລຸນາທິຄຸນຂອງອົງພຣະເຢຊູຄຣິດເຈົ້າ ດຳລົງຢູ່ກັບພວກເຈົ້າ
ຄູ່ຄົນເຖີ້ນ ອາເມນ

*[ຂຽນເຖິງຊາວ ຟີລິບປອຍ ຈາກ ໂຣມ ສົ່ງໂດຍ ເອປາໂຟດີໂຕ]*

# ໂກໂລຊາຍ

## ໂກໂລຊາຍ ບົດທີ 1

1:1 ຈາກ ໂປໂລ ທູດພິເສດຂອງ ພຣະເຢຊູຄຣິດ ຕາມພຣະປະສົງຂອງພຣະເຈົ້າ
ກັບຈາກໝູ່ຮ່ວມງານຄື ຕີໂມທຽວ ນ້ອງຊາຍໃນພຣະເຈົ້າຂອງພວກເຮົາ
1:2 ຮຽນ ພີ່ນ້ອງຄົນຂອງພຣະເຈົ້າ ພ້ອມກັບພີ່ນ້ອງທັງຫລາຍຜູ້ທີ່ຈົ່ງຮັກພັກດີໃນ
ພຣະຄຣິດ ຊຶ່ງຢູ່ເມືອງ ໂກໂລຊາຍ ຂໍໃຫ້ຮົ່ມພຣະຄຸນກັບຄວາມສະຫງົບສຸກ

ຈາກພຣະເຈົ້າຜູ້ເປັນພໍ່ ກັບຈາກອົງພຣະເຢຊູຄຣິດເຈົ້າ ຂອງເຮົາ ຮັກສາພວກເຈົ້າ
ໄວ້ເດີ້
1:3 ພວກເຮົາຈັ່ງຖວາຍຂອບໃຈພຣະເຈົ້າ ຜູ້ເປັນພໍ່ຂອງອົງພຣະເຢຊູຄຣິດເຈົ້າ
ຂອງເຮົາ ຈັ່ງອະທິຖານເວົ້ານຳພຣະເຈົ້າເພື່ອພວກເຈົ້າຢູ່ສະເໝີ
1:4 ເລີ່ມຕັ້ງແຕ່ພວກເຮົາໄດ້ຍິນເຖິງພວກເຈົ້າ ວ່າໄດ້ຮັບເຊື່ອໄວ້ວາງໃຈຢ່າງໝັ້ນ-
ຄົງໃນ ພຣະເຢຊູຄຣິດ ແລ້ວ ກັບມີຄວາມຮັກແພງຕໍ່ພີ່ນ້ອງຄົນຂອງພຣະເຈົ້າທັງ-
ຫລາຍນຳ
1:5 ນີ້ກໍຍ້ອນຄວາມຫວັງອັນໝັ້ນຄົງທີ່ມີໄວ້ໃນສະຫວັນເພື່ອພວກເຈົ້າ ຕາມທີ່ພວກ
ເຈົ້າເຄີຍໄດ້ຍິນມາກ່ອນແລ້ວໂດຍຖ້ອຍຄຳຄວາມຈິງ ຄືເລື່ອງຂ່າວປະເສີດນັ້ນ
ເນາະ
1:6 ຊຶ່ງໄດ້ແຜ່ໄປຮອດທົ່ວໂລກຮ່ວມທັງພວກເຈົ້າ ແລ້ວພວມເກີດຜົນທະວີຂຶ້ນຢູ່
ທົ່ວ ຄືກັນກັບພວມເກີດຜົນກັບພວກເຈົ້າ ນັບຕັ້ງແຕ່ມື້ທີ່ພວກເຈົ້າໄດ້ຍິນ ຈັ່ງໄດ້ຮູ້-
ຈັກເຖິງຄວາມຈິງເລື່ອງພຣະຄຸນຂອງພຣະເຈົ້າ
1:7 ຕາມທີ່ພວກເຈົ້າໄດ້ຮຽນຮູ້ມາແລ້ວທາງນາຍ ເອປາຟາ ຜູ້ເປັນໝູ່ຮ່ວມງານ
ຮັບໃຊ້ທີ່ຮັກແພງ ກັບເປັນຜູ້ຮັບໃຊ້ການງານຂອງ ພຣະຄຣິດ ດ້ວຍຄວາມຈິງຮັກ-
ພັກດີເພື່ອເຫັນແກ່ພວກເຈົ້າ
1:8 ຊຶ່ງ ລາວ ໄດ້ເວົ້າໃຫ້ພວກເຮົາຟັງ ເຖິງຄວາມຮັກຂອງພວກເຈົ້າ ທີ່ມີໂດຍໃນ
ພຣະວິນຍານ
1:9 ຍ້ອນເຫດນີ້ເນາະ ພວກເຮົາຈັ່ງບໍ່ໄດ້ຢູ່ໄດ້ເຊົາທີ່ຊິອະທິຖານວອນຂໍນຳພຣະ-
ເຈົ້າເພື່ອພວກເຈົ້າ ນັບຕັ້ງແຕ່ມື້ທີ່ເຮົາໄດ້ຍິນມານັ້ນ ຈັ່ງວອນຂໍໃຫ້ພວກເຈົ້າຮູ້ຈັກ
ດີເຖິງພຣະປະສົງຂອງພຣະເຈົ້າ ເຕັມດ້ວຍສະຕິປັນຍາກັບຄວາມເຂົ້າໃຈຝ່າຍ
ວິນຍານ
1:10 ເພື່ອພວກເຈົ້າຊິໄດ້ໃຊ້ຊີວິດໃນທາງທີ່ສົມຄວນຕໍ່ອົງພຣະຜູ້ເປັນເຈົ້າ ຈັ່ງເປັນ
ທີ່ຄວນພໍໃຈຂອງເພິ່ນ ພຽບພ້ອມໃນການເກີດຜົນອັນດີງາມໃນໝົດຄູ່ແນວ ກັບ
ຈະເລີນຂຶ້ນໃນຄວາມເຂົ້າໃຈເຖິງພຣະເຈົ້າ

1:11 ຈັ່ງແຂງແຮງຂຶ້ນໃນຄູ່ຢ່າງໂດຍລິດກຳລັງອັນຮຸ່ງເຮືອງຂອງພຣະເຈົ້າ ເພື່ອຊິມີ
ຄວາມພຽນກັບມີຄວາມອົດທົນນານໃນໝົດຄູ່ຢ່າງດ້ວຍຄວາມປິຕິຍິນດີ
1:12 ຮູ້ຈັກການຖວາຍຂອບໃຈພຣະເຈົ້າຜູ້ເປັນພໍ່ ຜູ້ເພິ່ນໄດ້ໂປດປານໃຫ້ພວກເຮົາ
ມີສິດມີສ່ວນໃນມໍລະດົກ ຮ່ວມກັນກັບຄົນບໍລິສຸດທັງຫລາຍຂອງພຣະເຈົ້າຊຶ່ງຄົງ
ຢູ່ໃນຄວາມສະຫວ່າງ *ຂອງພຣະເຈົ້າ*
1:13 ຜູ້ເພິ່ນກອບກູ້ພວກເຮົາໃຫ້ລອດພົ້ນຈາກອຳນາດຂອງຄວາມມືດ ແລ້ວໄດ້
ໂອນຍ້າຍພວກເຮົາເຂົ້າສູ່ລາຊະອານາຈັກຂອງ ພຣະບຸດ ທີ່ຮັກຂອງເພິ່ນ
1:14 ຊຶ່ງໃນ ພຣະບຸດ ນັ້ນພວກເຮົາໄດ້ຮັບການໄຖ່ ໂດຍພຣະໂລຫິດຂອງເພິ່ນ ຄື
ໄດ້ຮັບການໃຫ້ອະໄພໂທດບາບ *ທັງສິ້ນສຸດ*
1:15 ເພິ່ນເປັນພາບລັກຂອງພຣະເຈົ້າ ຜູ້ຊຶ່ງຕາເບິ່ງບໍ່ເຫັນ ເປັນເອກຢູ່ກ່ອນໝົດຄູ່
ອັນຄູ່ແນວທີ່ຖືກສ້າງຂຶ້ນມານັ້ນ
1:16 ຄືໂດຍ *ພຣະເຢຊູ* ນັ້ນ ໝົດຄູ່ອັນຄູ່ແນວໄດ້ຖືກສ້າງຂຶ້ນມາ ບໍ່ວ່າຊິເປັນແນວ
ທີ່ຢູ່ເທິງຟ້າສະຫວັນ ຫລືແນວທີ່ຢູ່ເທິງແຜ່ນດິນໂລກ ແນວທີ່ຕາເຫັນຫລືແນວທີ່
ຕາບໍ່ເຫັນ ບໍ່ວ່າຊິເປັນລາຊະບັນລັງ ຫລືເປັນລາຊະອານາຈັກ ຫລືເປັນເທບຜູ້-
ຄອບຄອງ ຫລືເປັນເທບຜູ້ມີອຳນາດ ທັງໝົດຄູ່ອັນຄູ່ແນວນີ້ເຄີຍຖືກສ້າງຂຶ້ນມາ
ໂດຍເພິ່ນ ກັບເພື່ອເພິ່ນ
1:17 ຄືເພິ່ນດຳລົງຢູ່ກ່ອນໝົດຄູ່ແນວທີ່ມີຢູ່ ແລ້ວໝົດທັງປວງນັ້ນ ໄດ້ປະກອບກັນ
ຂຶ້ນ ຄົງຢູ່ໂດຍເພິ່ນ
1:18 ແລ້ວເພິ່ນເປັນຫົວຂອງພຣະກາຍ ຄືກຸ່ມຜູ້ເຊື່ອນັ້ນ ເປັນກົກເປັນເຄົ້າເປັນຜູ້
ທຳອິດທີ່ເປັນຂຶ້ນມາຈາກຕາຍ ເພື່ອວ່າເພິ່ນຊິມີຄວາມເປັນເລີດ ເປັນປະລະບຽງເ
ໜືອໝົດຄູ່ຢ່າງທັງປວງ
1:19 ດ້ວຍວ່າເປັນທີ່ຄວນພໍໃຈຂອງພຣະເຈົ້າຜູ້ເປັນພໍ່ ທີ່ຊິໃຫ້ຄວາມສົມບູນໃນ
ການເປັນພຣະເຈົ້າທັງໝົດ ສະຖິດຢູ່ໃນໂຕເພິ່ນຢ່າງຄົບຖ້ວນ

1:20 แล้วโดย พระเยซู นั้น พระเจ้า ຊິໃຫ້ໝົດຄູ່ແນວຄືນດີກັນກັບເພິ່ນໂດຍ
ທາງ ພຣະເຢຊູ ບໍ່ວ່າຊິເປັນແນວຢູ່ໃນແຜ່ນດິນໂລກ ຫລືເປັນແນວຢູ່ເທິງຟ້າ-
ສະຫວັນ ພຣະເຢຊູ ໄດ້ເຮັດໃຫ້ມີສັນຕິພາບໂດຍພຣະໂລຫິດຢູ່ເທິງໄມ້ກາງແຂນ
ຂອງເພິ່ນ
1:21 ແລະພວກເຈົ້ານັ້ນ ຊຶ່ງເມື່ອກ່ອນພວກເຈົ້າກໍໝາງເມີນຈາກເພິ່ນ ເປັນສັດຕູ
ກັນກັບເພິ່ນໃນໃຈ ຍ້ອນການຊົ່ວຕ່າງໆ ທີ່ພວກເຈົ້າໄດ້ເຮັດ ແຕ່ບັດນີ້ ເພິ່ນໄດ້
ໂຜດໃຫ້ຄືນດີກັນກັບເພິ່ນແລ້ວ
1:22 ໂດຍຄວາມຕາຍທາງຮ່າງກາຍຊຶ່ງເນື້ອໜັງເລືອດຂອງເພິ່ນ ເພື່ອຊິໄດ້ມອບ
ຖວາຍພວກເຈົ້າ ໃຫ້ເປັນຜູ້ບໍລິສຸດບໍ່ມີຕຳນິ້ມົນທິນຕໍ່ໜ້າພຣະເຈົ້າ
1:23 ຄືຄັ່ນແມ່ນວ່າພວກເຈົ້າໄດ້ດຳລົງໃນຄວາມເຊື່ອອີຫລີ ມີຮາກຖານ ມີຄວາມ
ແນ້ວແນ່ ແລ້ວບໍ່ມີການຫັນເຫອອກໄປຈາກຄວາມຫວັງອັນໝັ້ນຄົງທີ່ມີຢູ່ໃນຂ່າວ
ປະເສີດນັ້ນ ຊຶ່ງພວກເຈົ້າໄດ້ຍິນມາແລ້ວ ທີ່ໄດ້ຮັບການປ່າວປະກາດໃຫ້ຄົນທັງ-
ປວງຢູ່ທົ່ວໃຕ້ຟ້າ ທີ່ໂຕຂ້ອຍ ໂປໂລ ນີ້ໄດ້ຮັບມອບເປັນຜູ້ຮັບໃຊ້ນຳ
1:24 ຊຶ່ງບັດນີ້ ຂ້ອຍມີຄວາມຍິນດີທີ່ໄດ້ທົນເອົາຄວາມທຸກຍາກລຳບາກເພື່ອພວກ
ເຈົ້າ ຄືຖືກບີບຄັ້ນຂົ່ມເຫງ ຖືກຄວາມທຸກທໍລະມານໃນຕົນໂຕຂອງຂ້ອຍ ໃຫ້ເຕັມ
ຄົບເພື່ອ ພຣະຄຣິດ ຍ້ອນເຫັນແກ່ພຣະກາຍຂອງເພິ່ນ ຄືກຸ່ມຜູ້ເຊື່ອນັ້ນ
1:25 ຊຶ່ງຂ້ອຍໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ ຕາມທີ່ພຣະເຈົ້າໄດ້ມອບໝາຍ
ໃຫ້ຂ້ອຍເພື່ອພວກເຈົ້າ ກໍເພື່ອຊິສຳເລັດຕາມ ພຣະຄຳ ຂອງພຣະເຈົ້າ
1:26 ຄືເລື່ອງລ້ຳເລິກທີ່ຖືກປິດຊ່ອນໄວ້ຢູ່ຫລາຍຍຸກສະໄໝ ກັບຫລາຍຊົ່ວອາຍຸຄົນ
ມາແລ້ວ ແຕ່ບັດນີ້ພຣະເຈົ້າໄດ້ເປີດເຜີຍໃຫ້ຄົນຂອງເພິ່ນຮູ້ຈັກ
1:27 ຄືພຣະເຈົ້າມີພຣະປະສົງທີ່ຊິໃຫ້ຄົນຕ່າງຊາດຮູ້ເຖິງເລື່ອງລ້ຳເລິກຂອງເພິ່ນ
ຊຶ່ງເຕັມລົ້ນດ້ວຍສະຫງ່າລາສີອັນຮຸ່ງເຮືອງ ຄືການທີ່ ພຣະຄຣິດ ສະຖິດຢູ່ໃນພວກ
ເຈົ້າ ເປັນຄວາມຫວັງໃນສະຫງ່າລາສີນັ້ນ
1:28 ຊຶ່ງພວກເຮົາປະກາດເລື່ອງເພິ່ນ ຈັ່ງເຕືອນສະຕິຄູ່ຄົນ ບອກສອນຄູ່ຄົນໂດຍ
ໃຊ້ສະຕິປັນຍາໃນຄູ່ຢ່າງ ເພື່ອພວກເຮົາຊິໄດ້ນຳຄູ່ຄົນມາຖວາຍ *ຕໍ່ພຣະເຈົ້າ* ວ່າ
ເປັນຜູ້ໃຫຍ່ໃນ ພຣະເຢຊູຄຣິດ ແລ້ວ

1:29 ຍ້ອນເຫດນີ້ເນາະ ຂ້ອຍຈັ່ງຮັບໃຊ້ການງານຂອງພຣະເຈົ້າດ້ວຍຄວາມພະຍາ-
ຍາມ ໂດຍລິດທານຸພາບຂອງເພິ່ນຜ່ານທາງໂຕຂ້ອຍຢ່າງເຫລືອລົ້ນ

## ໂກໂລຊາຍ ບົດທີ 2

2:1 ຄື ຂ້ອຍຢາກໃຫ້ພວກເຈົ້າຮູ້ວ່າ ຂ້ອຍພະຍາຍາມຕໍ່ສູ້ຫລາຍສໍ່າໃດເພື່ອພວກ
ເຈົ້າ ກັບເພື່ອຊາວເມືອງ ລາວດີເກອາ ພ້ອມເພື່ອຄົນທັງຫລາຍຜູ້ຍັງບໍ່ທັນໄດ້
ເຄີຍເຫັນໜ້າຂ້ອຍ
2:2 ເພື່ອວ່າ ເຂົາຊິຮັບການໜຸນໃຈ ຜູກພັນກັນໃນຄວາມຮັກ ບັນລຸເຖິງຄວາມເຂົ້າ-
ໃຈຢ່າງເຕັມປ່ຽມແນ້ວແນ່ ຮູ້ຈັກດີເຖິງເລື່ອງເລິກລັບຂອງພຣະເຈົ້າຜູ້ເປັນພໍ່ ກັບ
ພຣະຄຣິດ ນໍາ
2:3 ຊຶ່ງໃນພຣະເຈົ້ານັ້ນ ມີຊັບສົມບັດປິດຊ່ອນໄວ້ ເຖິງສະຕິປັນຍາ ກັບຄວາມອ້ອມ
ຮູ້ທັງໝົດ
2:4 ຂ້ອຍເວົ້າແນວນີ້ ເພື່ອບໍ່ໃຫ້ມີໃຜມາລໍ້ລວງພວກເຈົ້າດ້ວຍຄໍາຊັກຊວນອັນເປັນ-
ຕາຟັງ
2:5 ຄື ເຖິງແມ່ນວ່າໂຕຂ້ອຍຊິບໍ່ໄດ້ຢູ່ນໍາພວກເຈົ້າ ຈິດໃຈຂອງຂ້ອຍກໍຍັງຢູ່ນໍາ ຈັ່ງມີ
ຄວາມຊົມຊື່ນຍິນດີທີ່ຮູ້ເຫັນວ່າພວກເຈົ້າຢູ່ນໍາກັນຢ່າງຮຽບຮ້ອຍ ມີຄວາມເຊື່ອ-
ໝັ້ນໃນ ພຣະຄຣິດ
2:6 ຈັ່ງຊັ້ນ ຕາມທີ່ພວກເຈົ້າໄດ້ຮັບເອົາພຣະເຢຊູຄຣິດເຈົ້າແນວໃດມາແລ້ວ ກໍໃຫ້
ດໍາເນີນຊີວິດໃນເພິ່ນແນວດຽວກັນນັ້ນເດີ້
2:7 ດ້ວຍວ່າ ມີຮາກຖືກຢັ່ງລົງໄວ້ແລ້ວ ແລ້ວພວມຖືກເສີມສ້າງຂຶ້ນໃນເພິ່ນ ກັບ
ພວມຖືກຕັ້ງໝັ້ນໃນຄວາມເຊື່ອ ຕາມທີ່ພວກເຈົ້າໄດ້ຮັບການສອນຮຽນຮູ້ມາແລ້ວ
ນັ້ນ ຈັ່ງເຕັມລົ້ນດ້ວຍການຂອບຄຸນຢູ່ໃນຫັ້ນ
2:8 ແຕ່ໃຫ້ລະວັງເດີ້ ເພື່ອບໍ່ໃຫ້ໃຜມາໂກງພວກເຈົ້າ ດ້ວຍການອ້າງຫລັກປັດຊະ-
ຍາ ກັບແນວລໍ້ລວງຕ່າງໆ ອັນສະຫລາດແກມໂກງທີ່ບໍ່ມີສາລະ ຕາມທໍານຽມປະ-
ເພນີຂອງຄົນ ຕາມຫລັກການທາງຄ່ານິຍົມຂອງໂລກນີ້ ຊຶ່ງບໍ່ແມ່ນແນວທາງຂອງ
ພຣະຄຣິດ ເລີຍ
2:9 ຄືໃນໂຕເພິ່ນເອງ ການເປັນພຣະເຈົ້າໄດ້ດໍາລົງຢູ່ຢ່າງເຕັມປ່ຽມ

2:10 ແລ້ວພວກເຈົ້າກໍໄດ້ຄົບບໍລິບູນໃນເພິ່ນ ຜູ້ເປັນປະລະບຽງ ເປັນຜູ້ບັນຊາການ
ສູງສຸດ ເໜືອປວງເທບຜູ້ຄອງກັບສັກເທບທັງໝົດ
2:11 ແລ້ວໃນ ພຣະເຢຊູ ນັ້ນ ພວກເຈົ້າໄດ້ຮັບການເຂົ້າພິທີຕັດແລ້ວ ເປັນການເຂົ້າ
ພິທີຕັດແນວທີ່ບໍ່ໄດ້ເຮັດໂດຍມືມະນຸດ ແຕ່ເປັນການປົດຕົວບາບຝ່າຍເນື້ອໜັງ
ອອກໄປ ໂດຍພິທີຕັດແບບຂອງ ພຣະຄຣິດ
2:12 ຊຶ່ງພວກເຈົ້າໄດ້ຖືກເຂົ້າມີສ່ວນຮ່ວມໃນຄວາມຕາຍກັບ ພຣະເຢຊູ ແລ້ວ ຊຶ່ງ
ໃນການນັ້ນພວກເຈົ້າໄດ້ເປັນຂຶ້ນມາກັບເພິ່ນນໍາ ນີ້ກໍໂດຍທາງຄວາມເຊື່ອໃນການ
ງານຂອງພຣະເຈົ້າ ຜູ້ເພິ່ນໄດ້ບັນດານໃຫ້ ພຣະເຢຊູ ເປັນຂຶ້ນມາຈາກຕາຍ
2:13 ຊຶ່ງແມ່ນແຕ່ໃນຂະນະທີ່ພວກເຈົ້າຍັງຢູ່ໃນສະພາບຕາຍໄປແລ້ວຍ້ອນການ
ລະເມີດຝ່າຝືນກົດບັນຍັດ ພ້ອມທັງທາງເນື້ອໜັງບໍ່ໄດ້ເຂົ້າພິທີຕັດ ກໍຕາມ ບັດນີ້
ພຣະເຈົ້າໄດ້ໂປດປານໃຫ້ພວກເຈົ້າມີຊີວິດໃໝ່ນໍາກັນກັບ ພຣະເຢຊູ ແລ້ວ ກັບໄດ້
ໂຜດໃຫ້ອະໄພການລະເມີດຂອງພວກເຈົ້າໃຫ້ໝົດ
2:14 ໂດຍວ່າເພິ່ນໄດ້ໂປດລົບລ້າງອາຍາຂໍ້ຄະດີຕ່າງໆ ຊຶ່ງເປັນຝ່າຍປະຕິປັກທີ່
ຟ້ອງຮ້ອງຄົນເຮົາ ເປັນແນວຂັດແຍ້ງຕໍ່ຕ້ານຄົນເຮົາ ແລ້ວເພິ່ນໄດ້ຖອນແນວນັ້ນ
ອອກຈາກໂຕພວກເຮົາໄປ ຕອກໄວ້ເທິງໄມ້ກາງແຂນແລ້ວ
2:15 ແລ້ວເພິ່ນໄດ້ປົດອາວຸດຂອງພວກເທບເຈົ້າ ກັບສັກເທບ ຜູ້ຄອບຄອງເທິງສາ-
ກົນໂລກນັ້ນ ໃຫ້ມັນໝົດອໍານາດໄປ ແລ້ວໄດ້ປະຈານພວກມັນຢ່າງເປີດເຜີຍໃນທີ່
ສາທາລະນະ ໂດຍໄດ້ຊະນະພວກມັນແລ້ວ
2:16 ຈັ່ງຊັ້ນ ຢ່າໃຫ້ຜູ້ໃດຕັດສິນພວກເຈົ້າໃນເລື່ອງແນວກິນແນວດື່ມ ຫລືໃນເລື່ອງ
ເທດສະການຕ່າງໆ ຫລືໃນເລື່ອງໜຶ່ງຄໍ່າສອງຄໍ່າ ຫລືໃນການຮັກສາມື້ພັກງານ
ຕ່າງໆ
2:17 ຊຶ່ງແນວໝູ່ນີ້ ເປັນພຽງແຕ່ເງົາເປັນພາບພົດເວົ້າເຖິງແນວທີ່ຊິມາໃນພາຍໜ້າ
ພຸ້ນ ແຕ່ແກ່ນແທ້ນັ້ນກໍຄື ພຣະຄຣິດ
2:18 ແລ້ວຢ່າໃຫ້ຜູ້ໜຶ່ງຜູ້ໃດລໍ້ລວງໂກງເອົາບໍາເໜັດລາງວັນຂອງພວກເຈົ້າໄປເດີ້
ໂດຍແອບມາເປັນຄົນນອບນ້ອມຖ່ອມໃຈ ໄດ້ນົບໄດ້ຂາບສິ່ງສັກສິດ ຮວມກັນສຸມ

ແຕ່ແນວທີ່ເຂົາບໍ່ຮູ້ບໍ່ເຫັນ ຍິ່ງຜະຫຍອງໂດຍບໍ່ມີສາລະ ຕາມຄວາມນຶກຄິດຝ່າຍ
ເນື້ອໜັງຂອງໂຕເຂົາເອງ
2:19 ຊຶ່ງເຂົາບໍ່ໄດ້ຢຶດໝັ້ນໃນເພິ່ນຜູ້ເປັນຫົວໜ້າເປັນປະລະບຽງນັ້ນ ຜູ້ຊຶ່ງພຣະ-
ກາຍທັງໝົດໄດ້ຮັບການບຳລຸງລ້ຽງ ປະສານຕໍ່ກັນດ້ວຍຂໍ້ແລະເອັນຕ່າງໆ ຈັ່ງມີ
ການຈະເລີນເຕີບໂຕຂຶ້ນໂດຍພຣະເຈົ້າ
2:20 ຈັ່ງຊັ້ນ ຄັ້ນພວກເຈົ້າໄດ້ຕາຍກັບ ພຣະຄຣິດ ພົ້ນຈາກຫລັກການຕ່າງໆ ທາງ
ໂລກແລ້ວ ເປັນຫຍັງພວກເຈົ້າກໍຍັງໃຊ້ຊີວິດຕາມຄ່ານິຍົມທາງໂລກນີ້ ຄືຍອມຢູ່
ໃຕ້ລະບຽບການຕ່າງໆ ຂອງທາງນັ້ນ
2:21 ເຊັ່ນ “ຫ້າມແຕະ ຫ້າມຊີມ ຫ້າມຊູນ”
2:22 ຊຶ່ງເປັນຫລັກຂໍ້ປະຕິບັດຕາມຄຳສັ່ງສອນຂອງຄົນຊື່ໆ ຍ້ອນວ່າແນວໝູ່ນັ້ນ ຊິ
ເສື່ອມສູນໝົດໄປຢູ່ແລ້ວ
2:23 ຄືຄຳສັ່ງສອນແນວໝູ່ນີ້ ເບິ່ງຊືງແລ້ວຄືມີປັນຍາຫລາຍ ໃນການບຳເພັຍໂຕ
ການປະຕິບັດຕາມຫລັກສາສະໜາ ການອ່ອນນ້ອມຖ່ອມໂຕ ການ ອົດຢາກທໍ-
ລະມານກາຍ ຊຶ່ງແນວໝູ່ນີ້ບໍ່ມີຄຸນຄ່າອີຫຍັງໃນການຕໍ່ສູ້ກັບກິເລດຕັນຫາຝ່າຍ
ເນື້ອໜັງ

## ໂກໂລຊາຍ ບົດທີ 3

3:1 ຄື ຄັ້ນພວກເຈົ້າໄດ້ເປັນຂຶ້ນຈາກຕາຍນຳກັນກັບ ພຣະຄຣິດ ແລ້ວ ກໍໃຫ້ສະ-
ແຫວງຫາສິ່ງໃດໆ ຊຶ່ງຢູ່ເບື້ອງເທິງເດີ້ ໝ້ອງທີ່ ພຣະຄຣິດ ປະທັບຢູ່ເບື້ອງຂວາ
ຂອງພຣະເຈົ້າ
3:2 ແລ້ວໃຫ້ໃສ່ໃຈຂອງໂຕໄວ້ກັບສິ່ງທີ່ຢູ່ເບື້ອງເທິງຫັ້ນເດີ້ ບໍ່ແມ່ນໃນສິ່ງຊຶ່ງຢູ່ຝ່າຍ
ໂລກນີ້
3:3 ຄືຊີວິດເກົ່າຂອງເຈົ້າໄດ້ຕາຍໄປແລ້ວ ແລ້ວຊີວິດໃໝ່ຂອງເຈົ້ານັ້ນກໍຖືກຊ່ອນ-
ໄວ້ຮ່ວມກັນກັບ ພຣະຄຣິດ ຢູ່ໃນພຣະເຈົ້າ
3:4 ແລ້ວບັດຍາມ ພຣະຄຣິດ ຜູ້ເປັນແຫລ່ງຊີວິດຂອງພວກເຮົາຊິມາປາກົດ ໃນ
ຕອນນັ້ນພວກເຈົ້າກໍຊິມາປາກົດພ້ອມກັນກັບເພິ່ນນຳ ໃນສະພາບສະຫງ່າລາສີ
ອັນຮຸ່ງເຮືອງ

3:5 ຈັ່ງຊັ້ນໃຫ້ປະຫານສ່ວນຕ່າງໆ ໃນໂຕເຈົ້າ ຊຶ່ງເປັນນິໄສຢູ່ທາງໂລກນີ້ເດີ້ ຄື
ການຫລິ້ນຊູ້ ແນວສົກກະປົກບໍ່ບໍລິສຸດ ຕັນຫາແຫ່ງເພດ ຄວາມໄຄ່ໃນທາງຊົ່ວ
ພ້ອມກັບຄວາມໂລບຊຶ່ງເປັນການໄຫວ້ຮູບເຄົາລົບ
3:6 ຍ້ອນແນວໝູ່ນີ້ເນາະ ເປັນເຫດໃຫ້ຄວາມຄຽດຂອງພຣະເຈົ້າຊິລົງມາສູ່ຫົວຂອງ
ຜູ້ຄົນທັງຫລາຍທີ່ບໍ່ຍອມເຊື່ອຟັງເພິ່ນ
3:7 ຊຶ່ງພວກເຈົ້າເຄີຍດໍາເນີນຕາມທາງນັ້ນຄືກັນ ຕອນທີ່ພວກເຈົ້າຍັງໃຊ້ຊີວິດ
ຮວມກັນສຸມໃນແນວໝູ່ນັ້ນ
3:8 ແຕ່ບັດນີ້ ໃຫ້ພວກເຈົ້າປົດຖິ້ມແນວໝູ່ນີ້ທັງໝົດຊະເດີ້ ຄືການໂມໂຫໜ້າເລືອດ
ຄວາມຂັດເຄືອງຄຽດຮ້າຍ ການຜູກພະຍາບາດມຸ້ງຮ້າຍ ການເວົ້າໝິ່ນປະມາດ
ການເວົ້າເພີຫຍາບຄາຍອອກຈາກປາກຂອງເຈົ້າ
3:9 ແລ້ວຢ່າຕົວະກັນແລະກັນເດີ້ ຍ້ອນວ່າພວກເຈົ້າໄດ້ຖອດຊີວິດຂອງຄົນເກົ່າ
ອອກໄປແລ້ວ ພ້ອມທັງໄດ້ຖິ້ມກິດຈະກໍາຂອງມັນນໍາ
3:10 ແລ້ວໄດ້ສວມຊີວິດຂອງຄົນໃໝ່ແລ້ວ ຊຶ່ງມີຄວາມຮູ້ໃໝ່ ຕາມພາບລັກຂອງ
ພຣະເຈົ້າ ຜູ້ເພິ່ນໄດ້ສ້າງຜູ້ໃໝ່ນັ້ນ
3:11 ຊຶ່ງໃນນັ້ນ ບໍ່ມີການຖືກັນວ່າເປັນເກຣັກຫລື ຢິວ ເປັນຜູ້ທີ່ເຂົ້າພິທີຕັດຫລືບໍ່ໄດ້
ເຂົ້າພິທີຕັດ ເປັນຄົນຕ່າງຊາດຫລືປ່າເຖື່ອນ ເປັນຂ້າທາດຫລື ໄທ ບໍ່ວ່າຊິເປັນ
ໃຜກໍຢ່າ ພຣະຄຣິດ ກໍເປັນສາລະພັດໝົດ ກັບດໍາລົງຢູ່ໃນສາລະພັດນັ້ນ
3:12 ຈັ່ງຊັ້ນ ໃນຖານະທີ່ວ່າເປັນປະຊາກອນໃນກຸ່ມຊົນທີ່ພຣະເຈົ້າໄດ້ເລືອກໄວ້ນັ້ນ
ເປັນຜູ້ບໍລິສຸດທີ່ເພິ່ນຮັກແພງຫລາຍ ໃຫ້ສວມໃຈເມດຕາເດີ້ ພ້ອມທັງໃຈປານີ ໃຈ
ຖ່ອມ ໃຈອ່ອນສຸພາບ ກັບໃຈອົດທົນໄວ້ໂດນນໍາ
3:13 ມີໃຈອົດທົນຕໍ່ກັນ ກັບມີການຍົກໂທດໃຫ້ອະໄພກັນແລະກັນ ໂດຍວ່າຄັນຜູ້-
ໃດມີເລື່ອງອີຫຍັງຕໍ່ກັນ ພຣະຄຣິດ ໄດ້ໃຫ້ອະໄພພວກເຈົ້າແນວໃດ ພວກເຈົ້າ
ຄວນຊິເຮັດແນວນັ້ນຄືກັນ
3:14 ແລ້ວສິ່ງສໍາຄັນເໜືອກວ່ານີ້ອີກ ກໍຄືໃຫ້ສວມໃຈບຸນມີຄວາມຮັກແພງແບບ
ຂອງພຣະເຈົ້າ ຊຶ່ງເປັນສິ່ງທີ່ຜູກພັນຄູ່ແນວໄວ້ຢ່າງສົມບູນດີພ້ອມ

3:15 ແລ້ວໃຫ້ຄວາມສະຫງົບສຸກຂອງພຣະເຈົ້າຄອບຄອງຢູ່ໃນຊີວິດຈິດໃຈຂອງ
ພວກເຈົ້າເດີ້ ຊຶ່ງເປັນເຫດທີ່ພຣະເຈົ້າໄດ້ເອີ້ນໄດ້ເຊີນພວກເຈົ້າມາເຂົ້າສູ່ພຣະ-
ກາຍອັນດຽວກັນ ຈັ່ງໃຫ້ມີການຂອບຄຸນນຳເດີ້
3:16 ແລ້ວໃຫ້ ພຣະຄຳ ຂອງ ພຣະຄຣິດ ສະຖິດຢູ່ໃນຊີວິດຈິດໃຈຂອງພວກເຈົ້າ
ທັງຫລາຍຢ່າງອຸດົມ ພຽບພ້ອມດ້ວຍສະຕິປັນຍາອັນອ້ອມຮູ້ເດີ້ ມີການສອນ
ແນະນຳເຕືອນກັນແລະກັນ ດ້ວຍ ເພງສັນລະເສີນ ເພງນະມັດສະການ ກັບເພງ
ສັນລະເສີນ ຂັບຮ້ອງດ້ວຍໃຈຮູ້ລຶກໃນພຣະກະລຸນາທິຄຸນ ຖວາຍໃຫ້ແກ່ອົງພຣະ-
ຜູ້ເປັນເຈົ້າ
3:17 ແລ້ວບໍ່ວ່າພວກເຈົ້າຊິເຮັດອີຫຍັງກໍຕາມ ຊິເປັນການເວົ້າກໍດີ ຫລືການກະທຳ
ກໍຢ່າ ໃຫ້ເຮັດໝົດຄູ່ແນວໂດຍໃນພຣະນາມຂອງອົງ ພຣະເຢຊູເຈົ້າ ຈັ່ງເຮັດດ້ວຍ
ການຂອບໃຈພຣະເຈົ້າຜູ້ເປັນພໍ່ໂດຍທາງເພິ່ນ
3:18 ຝ່າຍຜູ້ເປັນເມຍ ໃຫ້ຍອມຮັບຟັງຄຳຜົວຂອງໂຕເດີ້ ຊຶ່ງເປັນການເໝາະສົມໃນ
ອົງພຣະຜູ້ເປັນເຈົ້າ
3:19 ສ່ວນຜູ້ເປັນຜົວ ໃຫ້ຮັກແພງເມຍຂອງໂຕເດີ້ ແລ້ວຢ່າໃຫ້ເຄືອງແຄ້ນໃຈຕໍ່ເຂົາ
ເດີ້
3:20 ສ່ວນຜູ້ເປັນລູກໆ ໃຫ້ເຊື່ອຟັງພໍ່ແມ່ຂອງໂຕໃນຄູ່ແນວເດີ້ ຍ້ອນວ່າການແນວ
ນີ້ກໍເປັນທີ່ຄວນພໍໃຈຫລາຍຕໍ່ອົງພຣະຜູ້ເປັນເຈົ້າ
3:21 ຝ່າຍຜູ້ເປັນພໍ່ ຢ່າຍົວະໃຫ້ຮ້າຍລູກໆ ຂອງໂຕໃຫ້ຂັດເຄືອງໃຈເດີ້ ຢ້ານວ່າ
ເຂົາ ອາດ ເກີດການທໍ້ແທ້ໃຈ
3:22 ສ່ວນຜູ້ເປັນຂ້າທາດຮັບໃຊ້ ໃຫ້ເຊື່ອຟັງນາຍຂອງໂຕໃນຄູ່ຢ່າງຕາມເນື້ອໜັງ
ຢ່າງທຳມະດາໂລກ ບໍ່ແມ່ນເຮັດຕໍ່ໜ້າຕໍ່ຕາຢ່າງຄົນທີ່ມັກເອົາໃຈຄົນ ແຕ່ເຮັດ
ດ້ວຍນໍ້າໃສໃຈຈິງ ດ້ວຍຄວາມຢ້ານຢໍາພຣະເຈົ້າ
3:23 ແລ້ວ ບໍ່ວ່າພວກເຈົ້າຊິເຮັດອີຫຍັງກໍຕາມ ໃຫ້ເຮັດຢ່າງສຸດຈິດສຸດໃຈ ຄືມອບ
ຖວາຍແດ່ອົງພຣະຜູ້ເປັນເຈົ້າ ບໍ່ແມ່ນເຮັດໃຫ້ຄົນຊື່ໆ
3:24 ໂດຍຮູ້ກັນແລ້ວວ່າ ພວກເຈົ້າ *ຜູ້ເປັນທາຍາດ* ຊິໄດ້ຮັບມອບມໍລະດົກຈາກອົງ-
ພຣະຜູ້ເປັນເຈົ້າເປັນການຕອບແທນ ຄືພວກເຈົ້າຮັບໃຊ້ອົງ ພຣະຄຣິດ

3:25 แต่ส่อนผู้ใดที่เຮັດแบวบ่ຖືກບໍ່ແມ່ນ ກໍຊິໄດ້ຮັບຄ່າຕອບແທນສົມກັບແນວທີ່
ເຂົາໄດ້ເຮັດນັ້ນ ໂດຍບໍ່ມີການລຳອຽງເຫັນແກ່ໜ້າຜູ້ໃດເລີຍ

# ໂກໂລຊາຍ ບົດທີ 4

4:1 ຝ່າຍຜູ້ເປັນນາຍຂ້າທາດນັ້ນ ກໍໃຫ້ເຮັດນຳຂ້າທາດຮັບໃຊ້ຂອງໂຕດ້ວຍຄວາມ-
ທ່ຽງທຳຕາມສົມຄວນເດີ້ ໂດຍຮູ້ກັນວ່າພວກເຈົ້າກໍຍັງມີນາຍຢູ່ເທິງສະຫວັນຄືກັນ
4:2 ໃຫ້ອະທິຖານເວົ້ານຳພຣະເຈົ້າຢ່າງເອົາຈິງເອົາຈັງຕໍ່ໄປດ້ວຍຄວາມໝັ້ນພຽນ
ເດີ້ ມີໃຈເຝົ້າລະວັງຢູ່ໃນການນັ້ນດ້ວຍການຂອບຄຸນນຳ
4:3 ແລ້ວໃນລະຫວ່າງນັ້ນ ຊ່ອຍອະທິຖານເວົ້ານຳພຣະເຈົ້າເພື່ອພວກເຮົານຳແໜ່
ວ່າພຣະເຈົ້າຊິເປີດປະຕູໄວ້ເປັນທາງ ເພື່ອພວກເຮົາຊິມີໂອກາດປະກາດ ພຣະ-
ຄຳ ເຖິງຄວາມເລິກລັບເລື່ອງ ພຣະຄຣິດ ຊຶ່ງເປັນເຫດທີ່ຂ້ອຍຖືກກັກຂັງລ່າມໂສ້
ໄວ້
4:4 ເພື່ອຂ້ອຍ ອາດ ຊິເປີດເຜີຍເລື່ອງນີ້ໃຫ້ແຈ່ມແຈ້ງ ຕາມທີ່ຂ້ອຍຄວນປະກາດ
ນັ້ນ
4:5 ແລ້ວຝ່າຍພວກເຈົ້າ ກໍໃຫ້ໃຊ້ຊີວິດດ້ວຍສະຕິປັນຍາຕໍ່ຜູ້ຄົນຢູ່ພາຍນອກເດີ້
ໂດຍໃຊ້ໂອກາດໃນຄູ່ຍາມເວລາ
4:6 ແລ້ວໃຫ້ຄວາມເວົ້າຂອງພວກເຈົ້າມີເຫດມີຜົນ ປະກອບດ້ວຍພຣະກະລຸນາທິ-
ຄຸນຢູ່ສະເໝີ ໃຫ້ເປັນຕາຟັງຄືກັນກັບປຸງລົດຊາດດ້ວຍເກືອ ເພື່ອຊິຮູ້ວ່າສົມຄວນ
ຊິຕອບແຕ່ລະຄົນວ່າຈັ່ງໃດດີ
4:7 ສ່ວນນາຍ ຕີຊີໂກ ນັ້ນ ລາວ ຊິໄປເວົ້າໃຫ້ພວກເຈົ້າຟັງເຖິງຂ່າວເລື່ອງຂ້ອຍຢູ່
ທາງນີ້ ລາວກໍເປັນນ້ອງຮັກແພງ ເປັນໝູ່ຮ່ວມງານໃນການຮັບໃຊ້ອົງພຣະຜູ້ເປັນ-
ເຈົ້ານຳ
4:8 ຄືຂ້ອຍຊິໃຊ້ ລາວ ໄປຫາພວກເຈົ້າ ກໍເພື່ອ ລາວ ຊິຮູ້ເຫັນເຖິງສະຖານະການ
ແວດລ້ອມຂອງພວກເຈົ້າ ແລ້ວໜຸນນ້ຳໃຈພວກເຈົ້ານຳ
4:9 ກັບຂ້ອຍຊິໃຊ້ ນາຍ ໂອເນສິໂມ ໄປນຳ ຜູ້ເປັນນ້ອງຮັກແພງ ມີໃຈຈິ່ງຮັກພັກດີ
ເປັນໄທເມືອງດຽວກັນກັບພວກເຈົ້ານຳ ແລ້ວເຂົາຈັ່ງຊິບອກໃຫ້ພວກເຈົ້າຮູ້ເຖິງ
ເລື່ອງຕ່າງໆ ທີ່ເປັນໄປຢູ່ທາງນີ້

4:10 ສ່ວນ ນາຍ ອາຣິຊະຕາໂຂ ໝູ່ຖືກຈອງຈຳຮ່ວມກັນກັບຂ້ອຍ ລາວ ຝາກ
ຄວາມຄຶດຮອດມາຍັງພວກເຈົ້ານຳ ກັບ ມາຣະໂກ ຜູ້ເປັນລູກພີ່ລູກນ້ອງຂອງ ບາ-
ຣະນາບາ ນັ້ນ ແມ່ນ ຜູ້ນີ້ເນາະ ທີ່ທາງນີ້ເຄີຍຝາກຄວາມໄວ້ແລ້ວວ່າ ຄັ່ນເຂົາມາ
ຫາພວກເຈົ້າ ກໍໃຫ້ຕ້ອນຮັບເຂົາເອົາເດີ້
4:11 ພ້ອມທັງ ນາຍ ເຢຊູ ທີ່ຄົນເອີ້ນຊື່ກັນວ່າ ຢູສະໂຕ ແມ່ນຄົນພວກນີ້ເທົ່ານັ້ນທີ່
ເປັນໝູ່ຄົນ ຢິວ ຂອງຂ້ອຍ ທີ່ຮ່ວມງານຮັບໃຊ້ນຳຂ້ອຍເພື່ອລາຊະອານາຈັກຂອງ-
ພຣະເຈົ້າ ແລ້ວໝູ່ພວກນີ້ເຄີຍປອບໂຍນໜຸນໃຈຂ້ອຍນຳ
4:12 ແລ້ວ ນາຍ ເອປາຟາ ຊຶ່ງເປັນໄທເມືອງດຽວກັນກັບພວກເຈົ້າ ກັບເປັນຂ້າຮັບ-
ໃຊ້ຂອງ ພຣະຄຣິດ ຝາກຄວາມຄຶດຮອດມາຍັງພວກເຈົ້ານຳ ລາວ ມີໃຈຈົດຈໍ່
ໃນການອະທິຖານເວົ້ານຳພຣະເຈົ້າເພື່ອພວກເຈົ້າຢູ່ສະເໝີ ວ່າພວກເຈົ້າຊິຢືນ
ໝັ້ນຄົງ ເປັນຜູ້ໃຫຍ່ຢ່າງສົມບູນແບບຄົບຄູ່ທາງ ຕາມພຣະປະສົງຂອງພຣະເຈົ້າ
4:13 ຄື ຂ້ອຍນີ້ເປັນພະຍານຢືນຢັນໃຫ້ ລາວ ໄດ້ວ່າ ລາວ ມີໃຈກະຕືລືລົ້ນຫລາຍ
ເພື່ອພວກເຈົ້າ ກັບເພື່ອພີ່ນ້ອງທີ່ຢູ່ເມືອງ ລາວດີເກອາ ພ້ອມທັງພີ່ນ້ອງທີ່ຢູ່ເມືອງ
ເຮຍຣາໂປລີ ນຳ
4:14 ສ່ວນນາຍແພດ ລູກາ ທ່ານໝໍທີ່ເປັນຕາຮັກ ກັບນາຍ ເດມາ ທັງສອງໄດ້ຝາກ
ຄວາມຄຶດຮອດມາຍັງພວກເຈົ້ານຳ
4:15 ແລ້ວຂໍຝາກຄວາມຄຶດຮອດໄປຍັງພວກພີ່ນ້ອງຢູ່ເມືອງ ລາວດີເກອາ ກັບເຖິງ
ນາຍ ນິມຟາ ພ້ອມທັງຝາກຄວາມຄຶດຮອດໄປຍັງກຸ່ມຜູ້ເຊື່ອຄູ່ຄົນທີ່ໂຮມກັນຢູ່ໃນ
ເຮືອນຂອງ ລາວ ນຳແໜ່
4:16 ແລ້ວບັດຍາມອ່ານຈົດໝາຍສະບັບນີ້ໃຫ້ ໄທ ພວກເຈົ້າຟັງແລ້ວ ກໍໃຫ້ແລກ
ປ່ຽນກັນອ່ານກັບຈົດໝາຍສະບັບທີ່ຢູ່ເມືອງ ລາວດີເກອາ ນັ້ນນຳ
4:17 ແລ້ວໃຫ້ຊ່ອຍບອກນາຍ ອາຂີໂປ ວ່າ “ນີ້ແຫລະ ໃຫ້ເອົາໃຈໃສ່ໃນງານຮັບໃຊ້
ທີ່ອົງພຣະຜູ້ເປັນເຈົ້າໄດ້ມອບໝາຍໄວ້ໃຫ້ເຈົ້ານັ້ນ ຈັ່ງຮັບໃຊ້ເຖິງຄວາມສຳເລັດ
ເດີ້”

4:18 ຄຳທັກທາຍສຸດທ້າຍນີ້ ຂ້ອຍ ໂປໂລ ໄດ້ລົງໄວ້ໂດຍລາຍມືຂອງຂ້ອຍເອງ
ກະລຸນາຢ່າລືມໂສ້ຂອງຂ້ອຍນຳແໜ່ ຂໍໃຫ້ອົນພຣະຄຸນດຳລົງຢູ່ນຳພວກເຈົ້າເຖີ້ນ
ອາເມນ

*[ຂຽນ ຈາກ ໂຣມ ເຖິງຊາວ ໂກໂລຊາຍ ແລະສົ່ງ ໂດຍ ຕີຂີໂກ ກັບ ໂອເນສິໂມ]*

# 1 ເທຊະໂລນິກ

## 1 ເທຊະໂລນິກ ບົດທີ 1

1:1 ຈາກ ໂປໂລ ຊີລາວານ ກັບ ຕີໂມທຽວ ເຖິງພີ່ນ້ອງກຸ່ມຜູ້ເຊື່ອຊາວເມືອງ
ເທຊະໂລນິກ ຜູ້ຢູ່ໃນພຣະເຈົ້າຜູ້ເປັນພໍ່ ກັບຢູ່ໃນ ພຣະເຢຊູຄຣິດ ຜູ້ເປັນນາຍຊີ-
ວິດ ຂໍໃຫ້ພຣະກະລຸນາທິຄຸນກັບຄວາມສະຫງົບສຸກ ຊຶ່ງຈາກພຣະເຈົ້າຜູ້ເປັນພໍ່
ຂອງພວກເຮົາ ກັບຈາກ ພຣະເຢຊູຄຣິດ ຜູ້ເປັນນາຍຊີວິດ ຈົ່ງດຳລົງຢູ່ກັບພວກ
ເຈົ້າເດີ້
1:2 ພວກເຮົາຈົ່ງຂອບໃຈພຣະເຈົ້າຍ້ອນພວກເຈົ້າຄູ່ຄືນຢ່າງບໍ່ຢູ່ບໍ່ເຊົາ ແລ້ວກໍເອີ່ຍ
ຊື່ພວກເຈົ້າໃນຄຳອະທິຖານຕໍ່ພຣະເຈົ້າຂອງພວກເຮົາ
1:3 ຈົ່ງໄດ້ຄຶດພໍ້ເຖິງຜົນງານຂອງພວກເຈົ້າຢູ່ສະເໝີ ທີ່ພວກເຈົ້າເຮັດດ້ວຍຄວາມ-
ເຊື່ອ ກັບເຖິງງານອັນເໜັດເໜື່ອຍ ທີ່ພວກເຈົ້າເຮັດດ້ວຍຄວາມຮັກ ກັບເຖິງຄວາມ
ອົດທົນພາກພຽນທີ່ພວກເຈົ້າມີ ຊຶ່ງດ້ວຍຄວາມຫວັງອັນໝັ້ນຄົງໃນອົງພຣະເຢຊູ-
ຄຣິດເຈົ້າ ຕໍ່ພຣະເຈົ້າຜູ້ເປັນພໍ່ຂອງພວກເຮົາທັງຫລາຍ
1:4 ພີ່ນ້ອງທີ່ຮັກເອີຍ ເຮົາຮູ້ກັນວ່າ ພຣະເຈົ້າໄດ້ເລືອກພວກເຈົ້າອອກມາໄວ້ແລ້ວ
1:5 ຄື ຂ່າວປະເສີດຂອງເຮົາທີ່ນຳມາເຖິງພວກເຈົ້ານັ້ນ ບໍ່ແມ່ນພຽງແຕ່ການເວົ້າຊື່
ໆ ແຕ່ມາດ້ວຍລິດອຳນາດ ກັບການສະໜັບສະໜູນຂອງ ພຣະວິນຍານ ພ້ອມທັງ
ຄວາມໝັ້ນຄົງອັນແນ້ວແນ່ ພວກເຈົ້າຈົ່ງຮູ້ກັນວ່າ ພວກເຮົາເປັນຄົນແບບໃດຕອນ
ມາຢູ່ນຳ ຊຶ່ງໄດ້ມາຍ້ອນເຫັນແກ່ພວກເຈົ້າ
1:6 ແລ້ວພວກເຈົ້າຈົ່ງໄດ້ເປັນລູກສິດຂອງພວກເຮົາ ທັງຂອງອົງພຣະຜູ້ເປັນເຈົ້າ
ນຳ ແມ່ນແຕ່ຕອນໄດ້ຮັບເອົາ ພຣະຄຳ ນັ້ນ ກໍໄດ້ຖືກບີບຄັ້ນດ້ວຍຄວາມທຸກຍາກ-
ລຳບາກຫລາຍແນວ ກໍຍັງຮັບເອົາດ້ວຍຄວາມຊົມຊື່ນຍິນດີໃນ ພຣະວິນຍານ

1:7 ຈັ່ງຊັ້ນ ພວກເຈົ້າຈັ່ງເປັນໂຕຢ່າງໃຫ້ກັບຄູ່ຄົນທີ່ເຊື່ອແລ້ວທົ່ວແຖວ ມາເກໂດ-
ເນຍ ກັບແຖວ ອະຂາຢາ ນຳ
1:8 ຄື ພຣະຄຳ ຂອງອົງພຣະຜູ້ເປັນເຈົ້າໄດ້ເລື່ອງລືກ້ອງອອກຈາກພວກເຈົ້າໄປ ບໍ່
ວ່າແຕ່ໃນແຖວ ມາເກໂດເນຍ ກັບແຖວ ອະຂາຢາ ເທົ່ານັ້ນ ແຕ່ວ່າການທີ່ພວກ
ເຈົ້າໄດ້ເຊື່ອໃນພຣະເຈົ້ານັ້ນ ໄດ້ເລື່ອງລືອອກໄປເຖິງທົ່ວຄູ່ໝ້ອງ ພວກເຮົາຈັ່ງບໍ່
ຈຳເປັນຊິຕ້ອງປະກາດອີຫຍັງໃຫ້ເຂົາອີກເລີຍ
1:9 ຄື ຄົນພວກນັ້ນໄດ້ເລົ່າໃຫ້ຟັງວ່າ ພວກເຮົາມີຜົນດີສ່ຳໃດຕອນເຂົ້າໄປຫາພວກ
ເຈົ້າ ທີ່ວ່າພວກເຈົ້າໄດ້ຫັນໜ້າອອກຈາກຮູບເຄົາລົບ ມາຫາພຣະເຈົ້າ ເພື່ອຮັບ-
ໃຊ້ເພິ່ນ ພຣະຜູ້ທ່ຽງແທ້ຜູ້ເພິ່ນດຳລົງຢູ່
1:10 ແລ້ວຈັ່ງຄອຍຖ້າຮັບການສະເດັດມາຈາກສະຫວັນຂອງ ພຣະບຸດ ພຣະເຈົ້າ ຜູ້
ເພິ່ນທີ່ພຣະເຈົ້າກະລຸນາໃຫ້ເປັນຂຶ້ນມາຈາກຕາຍ ຄື ພຣະເຢຊູ ນັ້ນເອງ ຜູ້ໃຫ້
ພວກເຮົາລອດພົ້ນຈາກການລົງໂທດອັນໃຫຍ່ຫລວງທີ່ຊິມານັ້ນ

## 1 ເທຊະໂລນິກ ບົດທີ 2

2:1 ພີ່ນ້ອງທັງຫລາຍເອີຍ ພວກເຈົ້າເອງຍັງຮູ້ກັນວ່າ ການທີ່ພວກເຮົາໄດ້ນຳຂ່າວ
ປະເສີດມາຫາພວກເຈົ້ານັ້ນ ມັນບໍ່ໄດ້ບໍ່ປະໂຫຍດຫຍັງເລີຍ
2:2 ແມ່ນແຕ່ວ່າ ພວກເຮົາເຄີຍທົນທຸກຍາກລຳບາກ ພ້ອມທັງການດູຖູກມາກ່ອນຢູ່
ເມືອງ ຟີລິບປອຍ ຊຶ່ງພວກເຈົ້າຮູ້ຈັກດີ ແລ້ວແມ່ນວ່າມີອຸປະສັກຕໍ່ຕ້ານຫລາຍ
ແນວກໍຕາມ ພວກເຮົາກໍຍັງມີໃຈກ້າໃນພຣະເຈົ້າຂອງເຮົາ ທີ່ຊິມາປະກາດຂ່າວ
ປະເສີດຂອງເພິ່ນໃຫ້ພວກເຈົ້ານຳ
2:3 ອີກແນວໜຶ່ງ ການຊັກຊວນຮຽກຮ້ອງຂອງພວກເຮົານັ້ນ ບໍ່ມີການຜິດພາດ ຫລື
ລູກຫລົ້ນສົກກະປົກ ຫລືການເລ້ຫລ່ຽມຫລອກລໍ້ໃດໆ ເລີຍ
2:4 ໂດຍວ່າ ພວກເຮົາໄດ້ຮັບການຮັບຮອງຈາກພຣະເຈົ້າແລ້ວ ເພິ່ນຈັ່ງມອບໝາຍ
ເລື່ອງຂ່າວປະເສີດນັ້ນໄວ້ກັບພວກເຮົາ ຈັ່ງຊັ້ນ ທີ່ພວກເຮົາປະກາດ ບໍ່ແມ່ນເພື່ອ
ເປັນທີ່ມັກຂອງຄົນ ແຕ່ເພື່ອພຣະເຈົ້າຕ່າງຫາກ ຜູ້ເພິ່ນໄດ້ພິສູດໃຈຂອງພວກເຮົາ
ແລ້ວ

2:5 ຄື ພວກເຮົາບໍ່ເຄີຍໃຊ້ຄຳປະຈົບປະແຈງຈັກເທື່ອ ຊຶ່ງພວກເຈົ້າຮູ້ກັນດີ ກັບບໍ່ໄດ້
ອ້າງອີທຍັງບັງໃຈຂີ້ໂລບໄວ້ດອກ ພຣະເຈົ້າເປັນພະຍານໃນເລື່ອງນີ້ໄດ້ເລີຍ
2:6 ແລ້ວພວກເຮົາບໍ່ໄດ້ມາຫາກຽດທາຍົດຈາກຄົນ ບໍ່ວ່າຈາກພວກເຈົ້າຫລືຄົນ-
ອື່ນໆ ແມ່ນແຕ່ເຮົາມີສິດຮຽກຮ້ອງເອົາອີຫຍັງກໍໄດ້ ໃນຖານະວ່າເປັນທູດພິເສດ
ຂອງ ພຣະຄຣິດ
2:7 ແຕ່ພວກເຮົາມີໃຈອ່ອນສຸພາບຕອນຢູ່ນຳພວກເຈົ້າ ຄືຮັກແພງຄືແມ່ໃຫ້ນົມລູກ
ຂອງໂຕເອງ
2:8 ຄື ພວກເຮົາຄິດຮອດພວກເຈົ້າດ້ວຍຄວາມຮັກ ພວກເຮົາຈັ່ງຍິນດີທີ່ຊິມອບ ບໍ່
ວ່າແຕ່ຂ່າວປະເສີດຂອງພຣະເຈົ້າໄວ້ນຳ ແຕ່ຍິນດີທີ່ຊິອຸທິດແມ່ນແຕ່ລົມຫາຍໃຈ
ຂອງໂຕເອງໃຫ້ນຳ ຍ້ອນວ່າພວກເຈົ້າໄດ້ກາຍເປັນທີ່ຮັກແພງຂອງພວກເຮົາແລ້ວ
2:9 ພີ່ນ້ອງທັງຫລາຍເອີຍ ພວກເຈົ້າຄືຊິຈື່ໄດ້ວ່າ ພວກເຮົາໄດ້ອອກໄປເຮັດວຽກ
ເຮັດງານຈົນເມື່ອຍ ທັງກາງເວັນກັບກາງຄືນ ກໍເພື່ອບໍ່ໃຫ້ເປັນພາລະຕໍ່ຜູ້ໃດໃນ
ພວກເຈົ້າເລີຍ ຕອນພວກເຮົາມາປະກາດຂ່າວປະເສີດຂອງພຣະເຈົ້າໃຫ້ພວກ
ເຈົ້າຟັງ
2:10 ພວກເຈົ້າເປັນພະຍານໄດ້ ພ້ອມທັງພຣະເຈົ້ານຳ ທີ່ວ່າພວກເຮົາໄດ້ພະຍາ-
ຍາມເອົາໃຈໃສ່ ໃຊ້ຊີວິດໃນທາງທ່ຽງທຳບໍລິສຸດ ຈັ່ງບໍ່ມີທີ່ຕິວ່າກ່າວໄດ້ເລີຍ ຕອນ
ຢູ່ນຳຜູ້ເຊື່ອໃນພວກເຈົ້າ
2:11 ຄື ພວກເຈົ້າຮູ້ວ່າ ພວກເຮົາໄດ້ເຕືອນສະຕິໜຸນໃຈ ບອກສອນພວກເຈົ້າຄູ່ຄົນ
ຄືພໍ່ກັບລູກ
2:12 ເພື່ອພວກເຈົ້າຊິໃຊ້ຊີວິດໃນທາງທີ່ສົມກັບການເປັນລູກໆ ຂອງພຣະເຈົ້າ ຜູ້
ເພິ່ນໄດ້ເອີ້ນໄດ້ເຊີນໃຫ້ພວກເຈົ້າເຂົ້າມາສູ່ລາຊະອານາຈັກ ກັບສະຫງ່າລາສີອັນ
ຮຸ່ງເຮືອງຂອງເພິ່ນ
2:13 ຍ້ອນເຫດນີ້ເນາະ ພວກເຮົາຈັ່ງຂອບໃຈພຣະເຈົ້າຢ່າງບໍ່ຢູ່ບໍ່ເຊົາ ຍ້ອນວ່າ ບັດ
ພວກເຈົ້າໄດ້ຮັບເອົາ ພຣະຄຳ ຂອງພຣະເຈົ້າໄວ້ແລ້ວນັ້ນ ຊຶ່ງໄດ້ຍິນຈາກພວກ
ເຮົາ ພວກເຈົ້າບໍ່ໄດ້ຮັບໄວ້ຢ່າງເປັນເລື່ອງຂອງຄົນເວົ້າຊື່ໆ ແຕ່ໄດ້ຮັບໄວ້ຢ່າງເປັນ

ຫລັກຄວາມຈິງ ເປັນ ພຣະຄຳ ຂອງພຣະເຈົ້າໂດຍແທ້ ຊຶ່ງ ພຣະຄຳ ນັ້ນພວມເຮັດ-
ວຽກຢູ່ໃນພວກເຈົ້າຜູ້ທີ່ຮັບເຊື່ອຈັ່ງເກີດຜົນ
2:14 ພີ່ນ້ອງທັງຫລາຍເອີຍ ພວກເຈົ້າໄດ້ເຮັດຕາມກຸ່ມຜູ້ເຊື່ອຂອງພຣະເຈົ້າໃນ
ພຣະເຢຊູຄຣິດ ຢູ່ເມືອງ ຢູດາຍ ເປັນໂຕຢ່າງ ແລ້ວພວກເຈົ້າຖືກການເຮັດໃສ່ຈາກ
ໄທບ້ານໄທເມືອງຂອງໂຕ ຄືກັນກັບພວກພີ່ນ້ອງຢູ່ຫັ້ນຖືກພວກ ຢູດາຍ ເຮັດໃສ່
ເຂົາ
2:15 ຊຶ່ງແມ່ນພວກນີ້ທີ່ໄດ້ຂ້າ ພຣະເຢຊູເຈົ້າ ພ້ອມທັງເຄີຍຂ້າພວກຜູ້ເປັນປາກ-
ເປັນສຽງຂອງເຂົາມາກ່ອນ ແລ້ວໄດ້ຂົ່ມເຫງພວກເຮົານຳ ພຣະເຈົ້າຈັ່ງບໍ່ພໍໃຈກັບ
ພວກເຂົາເລີຍ ແລ້ວພວກເຂົາກໍເປັນປະຕິປັກຕໍ່ຜູ້ຄົນທັງຫລາຍນຳ
2:16 ແລ້ວຄົນພວກນັ້ນຂັດຂວາງທາງໄວ້ ເພື່ອບໍ່ໃຫ້ພວກເຮົາປະກາດຂ່າວປະເສີດ
ຕໍ່ຄົນຊົນຊາດຕ່າງໆ ເພື່ອເຂົາຊິມີໂອກາດລອດພົ້ນໄດ້ ພວກນັ້ນເລີຍສະສົມບາບ
ໂຕເອງໄວ້ໃຫ້ເຕັມປ່ຽມຢູ່ສະເໝີ ຊຶ່ງໃນທີ່ສຸດຄວາມໂມໂຫອັນຮ້າຍແຮງຂອງ
ພຣະເຈົ້າຊິລົງໃສ່ພວກເຂົາເຖິງສຸດຂີດ
2:17 ແລ້ວ ພີ່ນ້ອງທັງຫລາຍເອີຍ ເປັນເຫດທີ່ພວກເຮົາຖືກພາກຈາກພວກເຈົ້າໄປ
ຊົ່ວລະຍະໜຶ່ງ ແຕ່ຈິດໃຈກໍຍັງຢູ່ນຳ ພວກເຮົາຈັ່ງປາດຖະໜາຢາກເຫັນໜ້າຂອງ
ພວກເຈົ້າອີກຢ່າງແຮງ
2:18 ຈັ່ງຊັ້ນ ພວກເຮົາໄດ້ຕັ້ງໃຈຊິມາຫາພວກເຈົ້າ ແມ່ນແຕ່ຂ້ອຍ ໂປໂລ ນີ້ກໍພະ-
ຍາຍາມທີ່ຊິມາເທື່ອແລ້ວເທື່ອເລົ່າ ແຕ່ວ່າພະຍາມານຊາຕານກໍຍັງຂັດຂວາງທາງ
ພວກເຮົາໄວ້
2:19 ໂອ້ ມີອີຫຍັງແໜ່ ຊິເປັນຄວາມຫວັງ ຄວາມປິຕິຍິນດີ ຫລືລາງວັນທີ່ຊິອ້າງອີງ
ໄດ້ ຕໍ່ໜ້າອົງພຣະເຢຊູຄຣິດເຈົ້າ ບັດເພິ່ນສະເດັດລົງມາ ຄັນບໍ່ແມ່ນພວກເຈົ້າເອງ
2:20 ຍ້ອນວ່າ ແມ່ນພວກເຈົ້າເນາະ ທີ່ເປັນສັກສີ ກັບເປັນທີ່ຊົມຊື່ນຍິນດີຂອງພວກ
ເຮົາ

## 1 ເທຊະໂລນີກ ບົດທີ 3

3:1 ຈັ່ງຊັ້ນ ບັດພວກເຮົາຊິທົນອີກບໍ່ໄດ້ ເລີຍເຫັນດີກັນວ່າ ຊິຢູ່ເມືອງ ອາແຖນ ຊະ
ກ່ອນ

3:2 ແລ້ວຈັ່ງໃຊ້ ຕີໂມທຽວ ຊຶ່ງ ລາວ ເປັນພີ່ນ້ອງໃນການຮັບໃຊ້ພຣະເຈົ້າ ກັບເປັນ
ໝູ່ຮ່ວມງານໃນຂ່າວປະເສີດຂອງ ພຣະຄຣິດ ໃຫ້ໄປຊ່ອຍເສີມສ້າງພວກເຈົ້າໃຫ້
ໝັ້ນຄົງ ກັບປອບໃຈພວກເຈົ້າໃນທາງຄວາມເຊື່ອນຳ
3:3 ເພື່ອບໍ່ໃຫ້ມີໃຜໃນພວກເຈົ້າຕົກໃຈຍ້ອນຄວາມທຸກຍາກລຳບາກຂອງເຮົາຢູ່
ທາງນີ້ ຄືພວກເຈົ້າເອງຮູ້ດີວ່າ ການແນວນັ້ນກໍມີໄວ້ສຳລັບພວກເຮົາຢູ່ແລ້ວ
3:4 ແທ້ຈິງແລ້ວ ຕອນທີ່ພວກເຮົາຍັງຢູ່ກັບພວກເຈົ້ານັ້ນ ພວກເຮົາກໍໄດ້ບອກໄວ້
ກ່ອນແລ້ວ ວ່າພວກເຮົາຊິຕ້ອງຖືກຄວາມທຸກຍາກລຳບາກຕາມທີ່ເປັນມາຢູ່ແລ້ວ
ນັ້ນ ຊຶ່ງພວກເຈົ້າໄດ້ຮູ້ກັນດີຢູ່ແລ້ວ
3:5 ເປັນຍ້ອນເຫດນີ້ເນາະ ທີ່ວ່າຕອນຂ້ອຍຊິທົນອີກບໍ່ໄດ້ ຂ້ອຍຈັ່ງສົ່ງຄົນໄປຖາມ
ຂ່າວເຖິງຄວາມເຊື່ອຂອງພວກເຈົ້າ ຢ້ານວ່າພະຍາມານຊາຕານຜູ້ເປັນເຈົ້າທົດ-
ລອງນັ້ນ ອາດ ຊິໄດ້ທົດລອງພວກເຈົ້າໃຫ້ຫລົງໂດຍແນວໃດແນວໜຶ່ງ ແລ້ວການ
ງານຂອງພວກເຮົາຢູ່ນັ້ນ ອາດ ຊິໝົດຄວາມໝາຍໄປຊື່ໆ
3:6 ແຕ່ວ່າບັດນີ້ ຕີໂມທຽວ ໄດ້ຫລົບຄືນມາຈາກໄປຫາພວກເຈົ້າແລ້ວ ຈັ່ງໄດ້ນຳ
ຂ່າວດີມາບອກເຖິງຄວາມເຊື່ອໝັ້ນກັບຄວາມຮັກແພງຂອງພວກເຈົ້າ ກັບອີກວ່າ
ພວກເຈົ້າໄດ້ຄຶດຮອດພວກເຮົາຢູ່ສະເໝີດ້ວຍຄວາມຫວັງດີ ກັບໃຝ່ຝັນຄຶດຢາກ
ເຫັນພວກເຮົາຫລາຍ ຄືກັນກັບທີ່ພວກເຮົາຄຶດຢາກຊິເຫັນພວກເຈົ້າຄືກັນ
3:7 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ພວກເຮົາກໍໄດ້ຮັບການເລົ້າໂລມໜຸນໃຈ ຄວາມ
ທຸກຍາກໃນໃຈຈັ່ງໄດ້ເບົາບາງລົງ ໄດ້ຍ້ອນຄວາມເຊື່ອຂອງພວກເຈົ້າເປັນເຫດ
3:8 ຊຶ່ງບັດນີ້ ພວກເຮົາຫາຍໃຈໄດ້ມ່ອນ ຄັ່ນພວກເຈົ້າຍັ່ງຍືນຢ່າງໝັ້ນຄົງຢູ່ໃນອົງ-
ພຣະຜູ້ເປັນເຈົ້າ
3:9 ຈັ່ງຊັ້ນ ພວກເຮົາຊິຂອບໃຈພຣະເຈົ້າຫລາຍສໍ່າໃດເພື່ອພວກເຈົ້າ ເປັນການ
ຕອບສະໜອງເພື່ອຄວາມຊົມຊື່ນຍິນດີທີ່ພວກເຮົາມີຕໍ່ພຣະເຈົ້າຂອງເຮົາຍ້ອນ
ພວກເຈົ້າ
3:10 ພວກເຮົາຈັ່ງອະທິຖານໝົດມື້ໝົດຄືນດ້ວຍຄວາມຈິງຈັງ ວ່າຢາກເຫັນໜ້າ
ພວກເຈົ້າອີກ ແລ້ວຢາກສົ່ງເສີມເພີ່ມຄວາມເຊື່ອຂອງພວກເຈົ້າສ່ວນທີ່ຍັງຂາດຢູ່
ໃຫ້ຄົບບໍລິບູນ

3:11 ຈັ່ງຂໍໃຫ້ພຣະເຈົ້າຜູ້ເປັນພໍ່ ກັບ ພຣະເຢຊູຄຣິດ ຜູ້ເປັນນາຍຊີວິດຂອງພວກ
ເຮົາ ນຳພາໃຫ້ກັບໄປຫາພວກເຈົ້າອີກ
3:12 ຈັ່ງຂໍໃຫ້ເພິ່ນໂຜດໃຫ້ຊີວິດຂອງພວກເຈົ້າ ຈະເລີນບໍລິບູນໄປດ້ວຍຄວາມຮັກ-
ແພງຕໍ່ກັນແລະກັນ ໃຫ້ທັງຄົນພາຍໃນກັບຄົນພາຍນອກນຳ ຄືກັນກັບທີ່ພວກເຮົາ
ມີຕໍ່ພວກເຈົ້າ
3:13 ເພື່ອວ່າ ພຣະເຢຊູເຈົ້າ ຊິໂຜດໃຫ້ຊີວິດຈິດໃຈຂອງພວກເຈົ້າຕັ້ງໝັ້ນຢູ່ໃນ
ຄວາມບໍລິສຸດ ບໍ່ມີທີ່ຕິວ່າກ່າວໄດ້ ຕໍ່ພຣະເຈົ້າຜູ້ເປັນພໍ່ຂອງພວກເຮົາ ບັດຍາມ
ພຣະເຢຊູຄຣິດເຈົ້າຜູ້ເປັນນາຍຊີວິດຂອງພວກເຮົາ ສະເດັດມາພ້ອມກັນກັບຄົນ
ບໍລິສຸດທັງປວງຂອງເພິ່ນ

## 1 ເທຊະໂລນິກ ບົດທີ 4

4:1 ໃນສຸດທ້າຍນີ້ ພີ່ນ້ອງທັງຫລາຍເອີຍ ພວກເຮົາຂໍໜຸນໃຈພວກເຈົ້າໃນ ພຣະເຢ-
ຊູເຈົ້າ ວ່າ ໃຫ້ເຕີບໂຕທະວີຂຶ້ນຢູ່ຢ່າງຕໍ່ເນື່ອງ ຕາມທີ່ພວກເຈົ້າເຄີຍຮັບຮູ້ຈາກ
ພວກເຮົາມາແລ້ວວ່າ ຄວນຊິດຳເນີນຊີວິດໃຫ້ເປັນທີ່ຄວນພໍໃຈຂອງພຣະເຈົ້າ
4:2 ຄືພວກເຈົ້າຮູ້ຈັກຄຳບອກສອນ ແນວທີ່ພວກເຮົາໄດ້ມອບໄວ້ໃຫ້ກັບພວກເຈົ້າ
ມາແລ້ວ ໂດຍທາງ ພຣະເຢຊູເຈົ້າ
4:3 ຄື ອັນນີ້ແມ່ນຕາມພຣະປະສົງຂອງພຣະເຈົ້າ ວ່າໃຫ້ເປັນຄົນບໍລິສຸດໄວ້ສະ-
ເພາະພຣະເຈົ້າ ສົມຄວນທີ່ຊິລະເວັ້ນການຫລິ້ນຊູ້
4:4 ເພື່ອໃຫ້ພວກເຈົ້າຄູ່ຄົນຮູ້ຈັກຮັກສາໂຕເອງໄວ້ໃຫ້ບໍລິສຸດ ຢ່າງເປັນທີ່ຖວາຍ
ກຽດພຣະເຈົ້າ
4:5 ບໍ່ແມ່ນປ່ອຍໃຫ້ຮວມກັນສຸມຮັກໄຄ່ໃນຕັນຫາແຫ່ງເພດ ຄືກັນກັບຄົນຕ່າງຊາດ
ທີ່ບໍ່ຮູ້ຈັກພຣະເຈົ້າ
4:6 ຈັ່ງບໍ່ໃຫ້ຜູ້ໃດເຮັດລ່ວງເກີນ ເອົາປຽບຂີ້ໂກງພີ່ນ້ອງໃນເລື່ອງນີ້ເລີຍ ຍ້ອນວ່າ
ພຣະຜູ້ເປັນເຈົ້າເປັນຜູ້ຊິແກ້ແຄ້ນ ສະໜອງໂທດໃຫ້ຄູ່ຄົນທີ່ເຮັດຜິດຈັ່ງຊີ້ ຕາມທີ່
ພວກເຮົາໄດ້ບອກໄວ້ເປັນພະຍານມາກ່ອນແລ້ວ
4:7 ຍ້ອນວ່າ ພຣະເຈົ້າບໍ່ໄດ້ເອີ້ນໄດ້ເຊີນພວກເຮົາມາໃຫ້ໃຊ້ຊີວິດໃນທາງສົກກະ-
ປົກ ແຕ່ໃຫ້ໃຊ້ໃນທາງບໍລິສຸດ

4:8 ຈັ່ງຊັ້ນ ຄົນໃດທີ່ປະຕິເສດດູໝິ່ນຄຳສັ່ງນີ້ ບໍ່ໄດ້ປະຕິເສດດູໝິ່ນຄົນຊື່ໆ ແຕ່ໄດ້
ປະຕິເສດດູໝິ່ນພຣະເຈົ້າ ຜູ້ເພິ່ນທີ່ໂຜດໃຫ້ ພຣະວິນຍານ ຂອງເພິ່ນໄວ້ກັບພວກ
ເຮົາແລ້ວ
4:9 ແຕ່ສ່ວນເລື່ອງການຮັກແພງພີ່ນ້ອງຊຶ່ງກັນແລະກັນນັ້ນ ບໍ່ຈຳເປັນທີ່ຊິຕ້ອງໃຫ້
ຂ້ອຍຂຽນເຖິງພວກເຈົ້າໃນເລື່ອງນີ້ ຍ້ອນວ່າແມ່ນພຣະເຈົ້າເອງສອນພວກເຈົ້າ
ໃຫ້ຮັກແພງຊຶ່ງກັນແລະກັນຢູ່ແລ້ວ
4:10 ແທ້ທີ່ຈິງ ພວກເຈົ້າມີຄວາມຮັກແພງຕໍ່ພີ່ນ້ອງທົ່ວແຖວ ມາເກໂດເນຍ ຢູ່ແລ້ວ
ແຕ່ພີ່ນ້ອງທັງຫລາຍເອີຍ ພວກເຮົາຂໍຮ້ອງຕໍ່ພວກເຈົ້າໃຫ້ມີການຮັກແພງກັນເພີ່ມ
ຂຶ້ນຫລາຍກວ່ານີ້ອີກເດີ້
4:11 ກັບໃຫ້ມີໃຈປາດຖະໜາໃຊ້ຊີວິດຢູ່ຢ່າງສະຫງົບສຸກ ປະຕິບັດໂຕຕາມທຸລະ
ຂອງໂຕ ເຮັດວຽກເຮັດງານໂດຍມືເຈົ້າຂອງ ຕາມຢ່າງທີ່ພວກເຮົາໄດ້ບອກສອນ
ພວກເຈົ້າມາແລ້ວ
4:12 ເພື່ອວ່າພວກເຈົ້າຊິໄດ້ດຳເນີນຊີວິດຢູ່ຢ່າງເໝາະສົມຕໍ່ຄົນຢູ່ພາຍນອກ ເພື່ອ
ພວກເຈົ້າຊິບໍ່ຕ້ອງທຸກຍາກລຳບາກອີຫຍັງເລີຍ
4:13 ພີ່ນ້ອງທັງຫລາຍເອີຍ ຂ້ອຍບໍ່ຢາກໃຫ້ພວກເຈົ້າຂາດຄວາມເຂົ້າໃຈເດີ້ ກ່ຽວ-
ກັບພີ່ນ້ອງທີ່ລ່ວງຫລັບໄປໃນ ພຣະເຢຊູ ແລ້ວ ເພື່ອພວກເຈົ້າຊິບໍ່ຕ້ອງໂສກເສົ້າ
ເປັນທຸກຄືກັນກັບຄົນອື່ນໆ ຜູ້ທີ່ບໍ່ມີຄວາມຫວັງ
4:14 ຄື ຄັນເຮົາເຊື່ອກັນວ່າ ພຣະເຢຊູ ໄດ້ຕາຍໄປ ແລ້ວໄດ້ເປັນຂຶ້ນມາຈາກຕາຍ
ຄັນຈັ່ງຊັ້ນ ພຣະເຈົ້າກໍຊິນຳເອົາຜູ້ທີ່ລ່ວງຫລັບໄປໃນ ພຣະເຢຊູ ໃຫ້ມານຳເພິ່ນ
ຕອນເພິ່ນຊິສະເດັດມາ
4:15 ຄື ພວກເຮົາບອກພວກເຈົ້າຕາມ ພຣະຄຳ ຂອງພຣະຜູ້ເປັນເຈົ້າວ່າ ສ່ວນເຮົາຜູ້
ຍັງມີຊີວິດຢູ່ໃນຍາມທີ່ພຣະຜູ້ເປັນເຈົ້າຊິສະເດັດລົງມາ ຊິບໍ່ໄດ້ຖືກຮັບຂຶ້ນໄປກ່ອນ
ພີ່ນ້ອງຜູ້ທີ່ລ່ວງຫລັບໄປແລ້ວນັ້ນ
4:16 ໂດຍວ່າ ພຣະຜູ້ເປັນເຈົ້າເອງຊິສະເດັດລົງມາຈາກສະຫວັນ ໂດຍສຽງຮ້ອງອັນ
ກູ່ກ້ອງ ດ້ວຍສຽງເທວະທູດອົງຊັ້ນເອກ ພ້ອມກັບສຽງແກຫລວງຂອງພຣະເຈົ້າ
ແລ້ວພີ່ນ້ອງທີ່ລ່ວງຫລັບໄປແລ້ວຢູ່ໃນ ພຣະຄຣິດ ກໍຊິເປັນຂຶ້ນມາກ່ອນ

4:17 ແລ້ວສ່ວນພວກເຮົາຜູ້ຍັງມີຊີວິດຢູ່ ກໍຊິຖືກຮັບຂຶ້ນໄປໃນເມກນຳກັນກັບພີ່ນ້ອງ
ຜູ້ທີ່ລ່ວງຫລັບໄປກ່ອນນັ້ນ ແລ້ວຄົນເຮົາທັງສອງຝ່າຍກໍຊິພົ້ກັນກັບອົງພຣະຜູ້-
ເປັນເຈົ້າຢູ່ເທິງທ້ອງຟ້າ ແລ້ວພວກເຮົາທັງຫລາຍກໍຊິຢູ່ກັບອົງພຣະຜູ້ເປັນເຈົ້າ
ຕະຫລອດການເປັນນິດ
4:18 ຈັ່ງຊັ້ນ ກໍໃຫ້ພີ່ນ້ອງປອບໃຈຊຶ່ງກັນແລະກັນດ້ວຍຖ້ອຍຄຳແນວໝູ່ນີ້ເດີ້

## 1 ເທຊະໂລນິກ ບົດທີ 5

5:1 ແຕ່ວ່າ ພີ່ນ້ອງທັງຫລາຍເອີຍ ສ່ວນເລື່ອງການເວລາທີ່ມີກຳນົດໄວ້ແລ້ວນັ້ນ
ມັນບໍ່ຈຳເປັນທີ່ເຮົາຊິຕ້ອງຂຽນບອກໃຫ້ພວກເຈົ້າຮູ້
5:2 ຍ້ອນວ່າ ພວກເຈົ້າເອງກໍຮູ້ດີຢູ່ແລ້ວ ວ່າມື້ຂອງອົງພຣະຜູ້ເປັນເຈົ້ານັ້ນຊິແອບ
ເຂົ້າມາຄືຂີ້ລັກລັກເຂົ້າມາໃນຍາມກາງຄືນ
5:3 ຄື ບັດຍາມທີ່ຄົນຊິເວົ້າກັນວ່າ “ສະຫງົບສຸກປອດໄພແລ້ວ” ໃນຍາມນັ້ນເນາະ
ຄວາມພິນາດຊິລົງມາສູ່ພວກເຂົາ ໂລດ ແລ້ວພວກເຂົາຊິໜີບໍ່ພົ້ນ ຄືແມ່ຊາວເຈັບ
ທ້ອງຊິອອກລູກ
5:4 ແຕ່ວ່າ ພີ່ນ້ອງທັງຫລາຍເອີຍ ພວກເຈົ້າບໍ່ໄດ້ຢູ່ໃນຄວາມມືດອີກແລ້ວ ທີ່ວ່າມື້
ນັ້ນຊິແອບເຂົ້າມາຫາພວກເຈົ້າ ຄືກັນກັບຂີ້ລັກ
5:5 ພວກເຈົ້າໄດ້ເປັນລູກຂອງຄວາມສະຫວ່າງແລ້ວ ກັບເປັນລູກຂອງກາງເວັນ ຄື
ພວກເຮົາທັງຫລາຍບໍ່ມີສ່ວນກ່ຽວຂ້ອງກັບກາງຄືນ ຫລືກ່ຽວຂ້ອງກັບຄວາມມືດ
5:6 ຈັ່ງຊັ້ນ ຢ່າໃຫ້ພວກເຮົາມົວເມົາຫລັບໄຫລໄປເດີ້ ຄືຄົນອື່ນໆ ແຕ່ໃຫ້ພວກເຮົາ
ຄອຍຖ້າເຝົ້າລະວັງ ມີສະຕິອ້ອມຄອບດີ
5:7 ຄືພວກຄົນທີ່ມົວເມົາຫລັບໄຫລໄປຫັ້ນ ກໍຫລັບໃນຄວາມມືດຍາມກາງຄືນ ກັບ
ຄົນທີ່ເມົາກໍເມົາໃນຄວາມມືດຍາມກາງຄືນ
5:8 ແຕ່ວ່າສຳລັບພວກເຮົາຜູ້ທີ່ຢູ່ຝ່າຍຄວາມສະຫວ່າງ ກໍໃຫ້ວາງໂຕຢ່າງມີສະຕິ
ອ້ອມຄອບ ອາໄສຄວາມເຊື່ອກັບຄວາມຮັກເປັນເສື້ອເກາະປ້ອງກັນໜ້າເອິກ ກັບ
ອາໄສຄວາມຫວັງອັນໝັ້ນຄົງໃນຄວາມພົ້ນເປັນໝວກເຫລັກ
5:9 ຍ້ອນວ່າພຣະເຈົ້າບໍ່ໄດ້ໝາຍພວກເຮົາໄວ້ເພື່ອການລົງໂທດ ແຕ່ເພື່ອມີຄວາມ-
ລອດພົ້ນໂດຍທາງອົງພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງພວກເຮົາ

5:10 ຜູ້ເພິ່ນທີ່ໄດ້ຕາຍເພື່ອພວກເຮົາທັງຫລາຍ ຈັ່ງຊັ້ນ ບໍ່ວ່າເຮົາຊິຕື່ນຫລືຊິຫລັບ
ໄປ ພວກເຮົາກໍຊິມີຊີວິດຮ່ວມກັນກັບພຣະອົງຢູ່ແລ້ວ
5:11 ຈັ່ງຊັ້ນ ໃຫ້ພວກເຈົ້າໜູນໃຈກັນແລະກັນ ຕ່າງຄົນຕ່າງສົ່ງເສີມຄວາມເຊື່ອຊຶ່ງ
ກັນແລະກັນ ຕາມຢ່າງທີ່ພວກເຈົ້າພວມເຮັດຢູ່ແລ້ວ
5:12 ແລ້ວ ພີ່ນ້ອງທັງຫລາຍເອີຍ ພວກເຮົາຂໍແນະນຳພວກເຈົ້າ ໃຫ້ຄອຍຖ້າສັງ-
ເກດຜູ້ຄົນທີ່ຮັບໃຊ້ໃນວຽກງານຂອງພຣະເຈົ້າໃນໝູ່ພວກເຈົ້າ ກັບຄົນທີ່ເບິ່ງແຍງ
ເຕືອນສະຕິພວກເຈົ້າໃນອົງພຣະຜູ້ເປັນເຈົ້ານຳ
5:13 ແລ້ວຈັ່ງໃຫ້ກຽດເຂົາຢ່າງສູງດ້ວຍຄວາມຮັກແພງ ຍ້ອນການງານທີ່ເຂົາໄດ້
ຮັບໃຊ້ນັ້ນ ແລ້ວໃຫ້ຢູ່ນຳກັນຢ່າງສະຫງົບສຸກເດີ້
5:14 ພີ່ນ້ອງທັງຫລາຍເອີຍ ບັດນີ້ພວກເຮົາຂໍບອກພວກເຈົ້າວ່າ ໃຫ້ຕັກເຕືອນຄົນທີ່
ບໍ່ມີລະບຽບວິໄນເດີ້ ໜູນນ້ຳໃຈຜູ້ທີ່ທໍ້ແທ້ໃຈເດີ້ ຊູກຳລັງຄົນທີ່ອ່ອນແອເດີ້ ກັບໃຫ້
ມີໃຈອົດທົນດົນນານຕໍ່ຄົນທັງປວງນຳເດີ້
5:15 ໃຫ້ຄ່ອຍລະວັງເບິ່ງກັນໄວ້ເດີ້ ຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນຄວາມຊົ່ວໃສ່ກັນ
ເລີຍ ແຕ່ໃຫ້ຕິດຕາມແຕ່ແນວດີງາມຕໍ່ໝູ່ພວກ ພ້ອມຕໍ່ຄົນທັງປວງເດີ້
5:16 ໃຫ້ມີໃຈຊົມຊື່ນຍິນດີຢູ່ສະເໝີເດີ້
5:17 ໃຫ້ອະທິຖານຕໍ່ພຣະເຈົ້າເປັນປະຈຳເດີ້
5:18 ໃຫ້ມີໃຈຂອບໃຈໃນໝົດຄູ່ແນວເດີ້ ຍ້ອນວ່າການເຮັດແນວນີ້ກໍເປັນຕາມ
ພຣະປະສົງຂອງພຣະເຈົ້າສຳລັບພວກເຈົ້າໃນ ພຣະເຢຊູຄຣິດ
5:19 ຢ່າລະງັບການຊົງນຳຂອງ ພຣະວິນຍານ ເດີ້
5:20 ຢ່າດູຖູກດູໝິ່ນຄຳພະຍາກອນຈາກພຣະເຈົ້າເດີ້
5:21 ໃຫ້ພິສູດຄູ່ຢ່າງເດີ້ ແລ້ວຍຶດໝັ້ນແຕ່ໃນແນວທີ່ດີງາມເດີ້
5:22 ໃຫ້ເວັ້ນໄວ້ຈາກຄວາມຊົ່ວໝົດຄູ່ແນວເດີ້
5:23 ແລ້ວຂໍໃຫ້ພຣະເຈົ້າແຫ່ງຄວາມສະຫງົບສຸກ ໂຜດໃຫ້ພວກເຈົ້າເປັນຄົນດີ
ພ້ອມບໍລິສຸດສະເພາະເພິ່ນ ແລ້ວຂໍໃຫ້ດວງວິນຍານ ກັບຈິດໃຈ ພ້ອມທັງຕົນໂຕ
ຂອງພວກເຈົ້າໄດ້ຮັບການປົກປ້ອງໄວ້ ບໍ່ມີທີ່ຕິວ່າກ່າວໄດ້ ໃນມື້ທີ່ພຣະເຢຊູຄຣິດ-
ເຈົ້າຂອງພວກເຮົາສະເດັດກັບມານັ້ນ

5:24 ຄືຜູ້ເພິ່ນທີ່ໄດ້ເອີ້ນໄດ້ເຊີນພວກເຈົ້າມານັ້ນ ເປັນຜູ້ສັດຊື່ພັກດີ ສາມາດຊິເຮັດ
ໃຫ້ເຖິງຄວາມສຳເລັດໄດ້ເລີຍ
5:25 ພີ່ນ້ອງທັງຫລາຍເອີຍ ຊ່ອຍອະທິຖານເພື່ອພວກເຮົາເດີ້
5:26 ໃຫ້ຕ້ອນຮັບພີ່ນ້ອງຄູ່ຄົນ ຕາມປະເພນີອັນດີງາມບໍລິສຸດເດີ້
5:27 ຂ້ອຍຂໍສັ່ງພວກເຈົ້າໄວ້ໂດຍອົງພຣະຜູ້ເປັນເຈົ້າ ວ່າໃຫ້ອ່ານຈົດໝາຍສະບັບນີ້
ໃຫ້ພີ່ນ້ອງຄົນບໍລິສຸດທັງຫລາຍຂອງພຣະເຈົ້າຟັງເດີ້
5:28 ຂໍໃຫ້ພຣະກະລຸນາທິຄຸນຂອງພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງຄົນເຮົາ ດຳ-
ລົງຢູ່ນຳພວກເຈົ້າເຖີ້ນ ອາເມນ

# 2 ເທຊະໂລນີກ

## 2 ເທຊະໂລນີກ ບົດທີ 1

1:1 ຈາກ ໂປໂລ ຊີລາວານ ກັບ ຕີໂມທຽວ ເຖິງກຸ່ມຜູ້ເຊື່ອຊາວເມືອງ ເທຊະໂລ-
ນີກ ຜູ້ຢູ່ໃນພຣະເຈົ້າ ຜູ້ເປັນພໍ່ຂອງພວກເຮົາ ກັບຢູ່ໃນອົງພຣະເຢຊູຄຣິດເຈົ້າ ຜູ້
ເປັນນາຍຊີວິດຂອງພວກເຮົານຳ
1:2 ຂໍໃຫ້ພຣະກະລຸນາທິຄຸນ ກັບຄວາມສະຫງົບສຸກຈາກພຣະເຈົ້າ ຜູ້ເປັນພໍ່ ກັບ
ຈາກອົງພຣະເຢຊູຄຣິດເຈົ້າ ຜູ້ເປັນນາຍຊີວິດຂອງພວກເຮົາ ດຳລົງຢູ່ນຳພວກເຈົ້າ
ເດີ້
1:3 ພີ່ນ້ອງທັງຫລາຍເອີຍ ພວກເຮົາຕ້ອງຂອບໃຈພຣະເຈົ້າເພື່ອພວກເຈົ້າຕາມ
ສົມຄວນຢູ່ສະເໝີ ຍ້ອນວ່າຄວາມເຊື່ອຂອງພວກເຈົ້າຈະເລີນເຕີບໂຕທະວີຂຶ້ນ
ຫລາຍແລ້ວ ພ້ອມທັງມີຄວາມຮັກແພງແບບຂອງພຣະເຈົ້າຕໍ່ກັນແລະກັນຢ່າງ
ຫລາຍໝົດຄູ່ຄົນ
1:4 ຈັ່ງຊັ້ນ ພວກເຮົາຈັ່ງຍົກຍ້ອງອ້າງອີງເຖິງພວກເຈົ້າໃນກຸ່ມຜູ້ເຊື່ອທັງຫລາຍຂອງ
ພຣະເຈົ້າວ່າ ພວກເຈົ້າມີຄວາມພາກພຽນອົດທົນ ກັບຄວາມເຊື່ອໝັ້ນໃນຍາມທີ່
ພວກເຈົ້າຕ້ອງທົນເອົາຕໍ່ການຂົ່ມເຫງບຽດບຽນ ກັບຄວາມທຸກຍາກລຳບາກຕ່າງໆ

1:5 ຊຶ່ງເປັນຫຼັກຖານທີ່ພິສູດຊັດເຈນວ່າ ການຕັດສິນລົງໂທດອັນຍຸດຕິທຳຂອງ
ພຣະເຈົ້າກໍເໝາະສົມແລ້ວ ຊຶ່ງພວກເຈົ້າເອງພໍເໝາະສຳລັບລາຊະອານາຈັກ-
ຂອງພຣະເຈົ້າແລ້ວ ແມ່ນແຕ່ໃນຍາມນີ້ພວກເຈົ້າຕ້ອງທົນເອົາຕໍ່ຄວາມທຸກຍາກ-
ລຳບາກຈັກໜ່ອຍ
1:6 ແລ້ວເນື່ອງຈາກວ່າມັນເປັນການຍຸດຕິທຳສຳລັບພຣະເຈົ້າທີ່ຊິຕອບສະໜອງ
ຄົນພວກນັ້ນ ທີ່ສ້າງຄວາມຫຍຸ້ງຍາກໃຫ້ພວກເຈົ້າ ດ້ວຍໄພພິບັດອັນຍາກລຳບາກ
ຄືກັນ
1:7 ແລ້ວສຳລັບພວກເຈົ້າຜູ້ທີ່ພວມຖືກກົດຂີ່ນັ້ນ ກໍຊິໄດ້ຮັບການພັກຜ່ອນຍ່ອນໃຈ
ພ້ອມທັງພວກເຮົານຳ ບັດຍາມ ພຣະເຢຊູເຈົ້າ ຊິມາປາກົດຈາກສະຫວັນ ພ້ອມ
ກອງເທວະທູດຂອງເພິ່ນຊຶ່ງປະກອບດ້ວຍລິດອຳນາດ
1:8 ຊຶ່ງຊິແກ້ແຄ້ນລົງໂທດດ້ວຍແປວໄຟອັນສຸກໃສ ຕໍ່ຄົນທັງຫລາຍທີ່ບໍ່ຮູ້ຈັກກັບ
ພຣະເຈົ້າ ພ້ອມກັບຄົນທີ່ບໍ່ຍອມເຊື່ອຟັງຂ່າວປະເສີດເລື່ອງພຣະເຢຊູຄຣິດເຈົ້າ
ນາຍຊີວິດຂອງຄົນເຮົາທັງຫລາຍ
1:9 ຊຶ່ງຄົນພວກນັ້ນຊິຖືກພຣະເຈົ້າລົງໂທດຢ່າງຮ້າຍແຮງ ເປັນການຈິບຫາຍວາຍ-
ວອດ ຖືກຕັດຂາດຈາກອົງພຣະຜູ້ເປັນເຈົ້າຕະຫລອດໄປເປັນນິດ ກັບຖືກຕັດຂາດ
ຈາກລິດທານຸພາບທີ່ປະກອບດ້ວຍສະຫງ່າລາສີອັນຮຸ່ງເຮືອງຂອງເພິ່ນ
1:10 ໃນມື້ນັ້ນຕອນເພິ່ນຊິສະເດັດກັບມາ ເພື່ອຮັບສັກສີໂດຍທາງຄົນບໍລິສຸດຂອງ
ເພິ່ນ ກັບເປັນທີ່ປະທັບໃຈຂອງຜູ້ເຊື່ອຄູ່ຄົນ ຍ້ອນວ່າຄຳພະຍານຂອງພວກເຮົາ
ເປັນທີ່ຍອມຮັບໃນພວກເຈົ້າ
1:11 ຈັ່ງຊັ້ນ ພວກເຮົາຈັ່ງອະທິຖານຢູ່ສະເໝີເພື່ອພວກເຈົ້າ ວ່າພຣະເຈົ້າຂອງເຮົາຊິ
ເຫັນດີນຳພວກເຈົ້າ ວ່າເໝາະສົມກັບຖານະທີ່ເພິ່ນໄດ້ເອີ້ນໄດ້ເຊີນມາແລ້ວນັ້ນ
ແລ້ວໂຜດໃຫ້ພຣະປະສົງອັນດີງາມຂອງເພິ່ນຄູ່ຢ່າງເຖິງທີ່ສຳເລັດໃນພວກເຈົ້າ
ພ້ອມທັງຜົນງານຂອງຄວາມເຊື່ອໂດຍລິດທານຸພາບຂອງເພິ່ນ
1:12 ເພື່ອພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ຊິໄດ້ຮັບສັກສີໂດຍໃນຊີວິດຂອງ
ພວກເຈົ້າ ແລ້ວພວກເຈົ້າກໍຊິຮັບສັກສີໃນເພິ່ນຄືກັນ ຊຶ່ງເປັນໄປຕາມພຣະກະລຸ-
ນາທິຄຸນຂອງພຣະເຈົ້າຂອງຄົນເຮົາ ກັບຂອງອົງພຣະເຢຊູຄຣິດເຈົ້ານຳ

# 2 ເທຊະໂລນິກ ບົດທີ 2

2:1 ບັດນີ້ ພີ່ນ້ອງທັງຫລາຍເອີຍ ພວກເຮົາຈັ່ງຂໍແນະນຳພວກເຈົ້າ ເຖິງເລື່ອງການ
ສະເດັດລົງມາຂອງອົງພຣະເຢຊູຄຣິດເຈົ້າ ເຖິງການຮ່ວມກັນຂອງເຮົາທັງຫລາຍ
ຢູ່ນຳເພິ່ນນັ້ນ
2:2 ຂໍຢ່າຟ້າວຕົກໃຈເປັນທຸກເປັນຮ້ອນ ເນື່ອງຈາກຂ່າວທີ່ ອາດ ມາ ໂດຍທາງວິນ-
ຍານ ທາງຄົນເວົ້າ ຫລື ທາງຈົດໝາຍ ທີ່ອ້າງວ່າມາຈາກພວກເຮົາ ວ່າມື້ການສະ-
ເດັດມາຂອງ ພຣະເຢຊູຄຣິດ ໄດ້ຜ່ານພົ້ນໄປແລ້ວ
2:3 ຢ່າໃຫ້ຜູ້ໃດຫລອກລວງພວກເຈົ້າໃນເລື່ອງນີ້ໂດຍວິທີໃດວິທີໜຶ່ງເລີຍ ຄືມື້
*ຂອງ ພຣະເຢຊູຄຣິດ* ນັ້ນຊິບໍ່ໄດ້ມາເຖິງ ນອກຈາກຊິມີການປະຖິ້ມທາງຄວາມຈິງ
ກ່ອນ ແລ້ວເຈົ້າແຫ່ງຄວາມຊົ່ວນັ້ນກໍຊິປາກົດອອກ ແມ່ນເຈົ້າແຫ່ງຄວາມພິນາດ
ນັ້ນເນາະ
2:4 ແມ່ນຜູ້ຕໍ່ຕ້ານຄວາມຈິງ ແລ້ວຍົກຕົວເອງຂຶ້ນໃຫ້ເໜືອຄູ່ອັນຄູ່ແນວທີ່ຢູ່ຝ່າຍ
ພຣະເຈົ້າ ຫລືຢູ່ຝ່າຍການນະມັດສະການ *ເພິ່ນ* ໂດຍວ່າໃນທີ່ສຸດໂຕມັນກໍຊິຂຶ້ນ
ນັ່ງບັນລັງ ຫາວ່າເປັນພຣະເຈົ້າຢູ່ໃນພຣະວິຫານຂອງພຣະເຈົ້ານັ້ນ ແລ້ວຈັ່ງສະ-
ແດງໂຕວ່າໂຕເອງເປັນພຣະເຈົ້າດ້ວຍຊ້ຳ
2:5 ພວກເຈົ້າບໍ່ຈື່ບໍ້ ວ່າຕອນຂ້ອຍຍັງຢູ່ນຳພວກເຈົ້ານັ້ນ ຂ້ອຍໄດ້ບອກສອນພວກ
ເຈົ້າໃນເລື່ອງນີ້ຢູ່ແລ້ວ
2:6 ແລ້ວບັດນີ້ ພວກເຈົ້າຮູ້ເຖິງລິດອຳນາດ ຊຶ່ງພວມຫ້າມຜູ້ນັ້ນໄວ້ໃນເວລານີ້ ເພື່ອ
ມັນຊິບໍ່ໄດ້ປາກົດໂຕກ່ອນເຖິງເວລາຂອງມັນ
2:7 ຍ້ອນວ່າ ລິດອຳນາດເລິກລັບອັນຊົ່ວຊ້າເລວຊາມນັ້ນ ໄດ້ເລີ່ມ ກິດຈະການ ຢູ່
ແລ້ວ ພຽງແຕ່ວ່າ ທ່ານຜູ້ນັ້ນທີ່ພວມຫ້າມມັນໄວ້ໃນເວລານີ້ກໍຍັງຊິຫ້າມມັນໄວ້ຢູ່
ຈົນກວ່າທ່ານຜູ້ນັ້ນຊິສະເດັດຂຶ້ນຈາກໄປ
2:8 ແລ້ວໃນເວລານັ້ນ ເຈົ້າແຫ່ງຄວາມຊົ່ວຊ້າເລວຊາມນັ້ນຊິປາກົດໂຕອອກ ແມ່ນ
ຜູ້ທີ່ອົງພຣະຜູ້ເປັນເຈົ້າຊິຈັດການໃຫ້ພິນາດໂດຍລົມຫາຍໃຈສິ້ນສຸດຈາກປາກ
ຂອງເພິ່ນ ພ້ອມທັງທຳລາຍມັນໂດຍແສງລັດສະໝີຂອງເພິ່ນ ຕອນເພິ່ນສະເດັດ
ກັບມານັ້ນ

2:9 ແລ້ວການປາກົດຂອງເຈົ້າແຫ່ງຄວາມຊົ່ວຊ້າເລວຊາມນັ້ນ ຊິເປັນໄປຕາມ ກິດ-
ຈະການ ຂອງພະຍາມານຊາຕານ ໂດຍການສະແດງອຳນາດອິດທິລິດຂອງມັນ ຄື
ສະແດງອັດສະຈັນອັນເປັນຕາງຶດ ພ້ອມທັງການຫລອກລວງ ຕ່າງໆ
2:10 ພ້ອມທັງມີອຸບາຍເລ້ຫລ່ຽມອັນບໍ່ເປັນທຳ ເປັນແນວຫລອກລວງຕ່າງໆ ນານາ
ເຮັດນຳຄົນທັງຫລາຍທີ່ພວມຊິພິນາດໄປ ຍ້ອນເຂົາບໍ່ໄດ້ຮັກຄວາມຈິງ ເພື່ອເຂົາ
ອາດ ຊິລອດພົ້ນໄດ້
2:11 ແລ້ວຍ້ອນເຫດນີ້ເນາະ ພຣະເຈົ້າຊິສົ່ງແນວລຸ່ມຫລົງໃຫ້ສະກົດຈິດພວກເຂົາ
ເພື່ອໃຫ້ເຂົາຫລົງເຊື່ອໃນແນວປອມ
2:12 ເພື່ອພວກເຂົາທັງຫລາຍຊິຢູ່ໃຕ້ການພິພາກສາກັນໝົດ ຄືຄູ່ຄົນທີ່ບໍ່ຍອມເຊື່ອ
ໃນຄວາມຈິງ ແຕ່ຍິນດີໃນທາງອະທຳ
2:13 ແຕ່ວ່າ ພີ່ນ້ອງທັງຫລາຍເອີຍ ພວກເຮົາຈັ່ງຂອບໃຈອົງພຣະຜູ້ເປັນເຈົ້າຢູ່ສະເ
ໝີ ທີ່ພວກເຈົ້າເປັນທີ່ຮັກແພງຂອງເພິ່ນ ຄືຕັ້ງແຕ່ທຳອິດມານັ້ນ ພຣະເຈົ້າໄດ້-
ເລືອກໄວ້ວ່າ ພວກເຈົ້າຊິລອດພົ້ນບາບໂດຍການຊຳລະໃຫ້ເປັນຜູ້ບໍລິສຸດ ດີພ້ອມ
ໂດຍ ພຣະວິນຍານ ກັບໂດຍການເຊື່ອວາງໃຈໃນຄວາມຈິງ
2:14 ຊຶ່ງເພິ່ນໄດ້ເອີ້ນໄດ້ເຊີນພວກເຈົ້າໂດຍທາງຂ່າວປະເສີດຂອງພວກເຮົາປະ-
ກາດ ເພື່ອຊິໄດ້ຮັບເຂົ້າສູ່ຄວາມສະຫງ່າຂອງພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງ
ຄົນເຮົານັ້ນ
2:15 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ໃຫ້ຢືນຢ່າງໝັ້ນຄົງເດີ້ ຖືເອົາຖືໃນຫລັກຄຳ-
ສອນທີ່ພວກເຈົ້າໄດ້ຮຽນຮູ້ມາແລ້ວເດີ້ ບໍ່ວ່າຊິໂດຍທາງການສອນ ຫລືທາງຈົດໝ
າຍຂອງເຮົາ
2:16 ບັດນີ້ ຂໍໃຫ້ອົງພຣະເຢຊູຄຣິດເຈົ້າ ຜູ້ເປັນນາຍຊີວິດຂອງເຮົາ ກັບພຣະເຈົ້າ ຜູ້
ເປັນພໍ່ທີ່ໄດ້ຮັກແພງຄົນເຮົາຢ່າງຫລາຍ ຊຶ່ງໃຫ້ຄວາມໝຸນໃຈຕະຫລອດໄປເປັນ-
ນິດ ກັບຄວາມຫວັງດີທີ່ໝັ້ນຄົງ ໂດຍທາງພຣະກະລຸນາທິຄຸນຂອງເພິ່ນ
2:17 ຈັ່ງເລົ້າໂລມໃຈພວກເຈົ້າ ແລ້ວຕັ້ງພວກເຈົ້າໃຫ້ໝັ້ນຄົງໃນທາງຄວາມເວົ້າຈາ
ອັນດີງາມ ກັບທາງການງານໝົດຄູ່ຢ່າງ

# 2 ເທຊະໂລນິກ ບົດທີ 3

3:1 ແລ້ວໃນທີ່ສຸດນີ້ ພີ່ນ້ອງທັງຫລາຍເອີຍ ຊ່ອຍອະທິຖານເພື່ອພວກເຮົາ ວ່າ
ພຣະຄໍາ ຂອງອົງພຣະຜູ້ເປັນເຈົ້າຊິໄດ້ແຜ່ອອກໄປໂດຍໄວຢ່າງສະດວກ ກັບຊິ
ໄດ້ຮັບກຽດ ຄືຈັ່ງໄດ້ເປັນໄປໃນໝູ່ພວກເຈົ້າແລ້ວ
3:2 ແລ້ວຊ່ອຍອະທິຖານຕໍ່ພຣະເຈົ້າເພື່ອພວກເຮົານໍາ ໃຫ້ພົ້ນຈາກພວກຄົນອັນ-
ທະພານກັບຄົນຊົ່ວ ຍ້ອນວ່າບໍ່ແມ່ນຄູ່ຄົນທີ່ມີຄວາມເຊື່ອ
3:3 ແຕ່ວ່າ ອົງພຣະຜູ້ເປັນເຈົ້າສັດຊື່ ຊຶ່ງເພິ່ນຊິຕັ້ງພວກເຈົ້າໃຫ້ໝັ້ນຄົງ ກັບປົກ-
ປ້ອງພວກເຈົ້າໄວ້ໃຫ້ພົ້ນຈາກພະຍາມານຊາຕານ
3:4 ຊຶ່ງພວກເຮົາມີຄວາມໝັ້ນໃຈໃນອົງພຣະຜູ້ເປັນເຈົ້າເຖິງພວກເຈົ້າ ວ່າພວກເຈົ້າ
ພວມເຮັດຕາມແນວທີ່ພວກເຮົາໄດ້ບອກສອນໄວ້ແລ້ວນັ້ນ ແລ້ວໝັ້ນໃຈວ່າຊິເຮັດ
ຕໍ່ໄປອີກ
3:5 ແລ້ວບັດນີ້ ຂໍອົງພຣະຜູ້ເປັນເຈົ້າທີ່ຊິນໍາຈິດໃຈຂອງພວກເຈົ້າໃນທາງຄວາມ
ຮັກແພງຂອງເພິ່ນ ກັບໃນທາງຄວາມອົດທົນພາກພຽນຂອງ ພຣະເຢຊູຄຣິດ ນໍາ
3:6 ແຕ່ວ່າ ພີ່ນ້ອງທັງຫລາຍເອີຍ ພວກເຮົາຂໍບອກພວກເຈົ້າໃນພຣະນາມຂອງ
ພຣະເຢຊູຄຣິດເຈົ້າຂອງຄົນເຮົາ ວ່າ ໃຫ້ຖອນໂຕອອກຈາກພີ່ນ້ອງທີ່ໃຊ້ຊີວິດໃນ
ທາງບໍ່ແມ່ນ ບໍ່ໃຫ້ຄົບກັບເຂົາ ຄືຜູ້ທີ່ບໍ່ໄດ້ໃຊ້ຊີວິດຕາມຫລັກຄໍາສອນທີ່ເຂົາໄດ້ຮັບ
ໄວ້ຈາກພວກເຮົາມາແລ້ວນັ້ນ
3:7 ຍ້ອນວ່າ ພວກເຈົ້າເອງກໍຮູ້ຢູ່ແລ້ວວ່າ ຄວນຊິເຮັດຕາມແບບຢ່າງຂອງພວກເຮົາ
ຄືພວກເຮົາບໍ່ເຄີຍໃຊ້ຊີວິດຕາມທາງແນວບໍ່ແມ່ນ ຕອນຢູ່ນໍາພວກເຈົ້າ
3:8 ແລ້ວພວກເຮົາບໍ່ໄດ້ກິນເຂົ້າປາອາຫານຂອງຜູ້ໃດຢ່າງບໍ່ມີລາຄາ ແຕ່ໄດ້ອອກ-
ເຫື່ອອອກແຮງ ເຮັດວຽກເຮັດງານໝົດມື້ໝົດຄືນ ເພື່ອຊິບໍ່ໄດ້ເປັນພາລະຕໍ່ຜູ້ໃດຜູ້
ໜຶ່ງໃນພວກເຈົ້າເລີຍ
3:9 ບໍ່ແມ່ນວ່າພວກເຮົາບໍ່ມີສິດທີ່ຊິຮຽກຮ້ອງເອົາອີຫຍັງ ແຕ່ວ່າພວກເຮົາໄດ້ເຮັດ
ຈັ່ງຊີ້ເພື່ອເປັນແບບຢ່າງໃຫ້ພວກເຈົ້າເຮັດຕາມພວກເຮົາ

3:10 ຄືແມ່ນແຕ່ຕອນພວກເຮົາຢູ່ນຳພວກເຈົ້ານັ້ນ ພວກເຮົາກໍຍັງບອກສອນພວກ
ເຈົ້າແນວນີ້ຢູ່ແລ້ວ ວ່າຄັນຜູ້ໃດບໍ່ຍອມເຮັດວຽກເຮັດງານ ຢ່າສູ່ໃຫ້ເຂົາກິນກຳແລ້ວ
ກັນ
3:11 ຄືພວກເຮົາໄດ້ຍິນມາແລ້ວວ່າ ມີຜູ້ລາງຄົນໃນພວກເຈົ້າພວມໃຊ້ຊີວິດຢ່າງຄົນ
ຂີ້ຄ້ານ ບໍ່ມີລະບຽບວິໄນໃນການເຮັດວຽກເຮັດງານເລີຍ ແຕ່ເປັນຄົນເຈົ້າກີ້ເຈົ້າ-
ການ ມັກໄປຫຍຸ້ງກັບທຸລະຂອງຄົນອື່ນໆ
3:12 ສຳລັບຄົນຈັ່ງຊີ້ ພວກເຮົາຂໍເຕືອນສະຕິ ສັ່ງໄວ້ໂດຍອົງພຣະເຢຊູຄຣິດເຈົ້າ
ຂອງຄົນເຮົາວ່າ ໃຫ້ເຂົາຍອມເຮັດວຽກເຮັດງານດ້ວຍຄວາມງຽບສະຫງົບ ແລ້ວ
ກິນເຂົ້າປາອາຫານຂອງໂຕເອງ
3:13 ແຕ່ສຳລັບພວກເຈົ້າ ພີ່ນ້ອງທັງຫລາຍເອີຍ ຢ່າສູ່ເມື່ອຍລ້າໃນການເຮັດດີ
3:14 ແລ້ວຄັນມີຜູ້ໃດບໍ່ຍອມເຊື່ອຟັງຖ້ອຍຄຳຂອງເຮົາໃນຈົດໝາຍນີ້ ກໍໃຫ້ຈຳຜູ້ນັ້ນ
ໄວ້ ແລ້ວຢ່າຄົບຫາກັບເຂົາເລີຍເດີ້ ເພື່ອເຂົາຊິອັບອາຍຮູ້ເມື່ອໂຕ
3:15 ແຕ່ຢ່າຖືວ່າເຂົາເປັນສັດຕູເລີຍ ແຕ່ໃຫ້ເຕືອນສະຕິເຂົາຢ່າງເປັນພີ່ນ້ອງກັນເດີ້
3:16 ບັດນີ້ ຂໍໃຫ້ອົງພຣະຜູ້ເປັນເຈົ້າແຫ່ງສັນຕິພາບ ໂຜດໃຫ້ພວກເຈົ້າມີຄວາມສະ-
ຫງົບສຸກໃນໝົດຄູ່ທາງຢູ່ສະເໝີ ແລ້ວຂໍໃຫ້ອົງພຣະຜູ້ເປັນເຈົ້າດຳລົງຢູ່ກັບພວກ
ເຈົ້າຄູ່ຄົນເດີ້
3:17 ຂ້ອຍ ໂປໂລ ນີ້ ໄດ້ລົງຂຽນຄຳຄຳນັບນີ້ດ້ວຍລາຍມືຂອງຂ້ອຍເອງ ຊຶ່ງເປັນ
ເຄື່ອງໝາຍໃນຈົດໝາຍຄູ່ສະບັບທີ່ບົ່ງບອກວ່າຂ້ອຍເປັນຜູ້ຂຽນ
3:18 ຂໍໃຫ້ພຣະກະລຸນາທິຄຸນຂອງອົງພຣະເຢຊູຄຣິດເຈົ້າຂອງຄົນເຮົາ ດຳລົງຢູ່ກັບ
ພວກເຈົ້າທັງຫລາຍເຖີ້ນ ອາເມນ

# 1 ຕີໂມທຽວ

## 1 ຕີໂມທຽວ ບົດທີ 1

1:1 ຈາກ ໂປໂລ ທູດພິເສດຂອງ ພຣະເຢຊູຄຣິດ ຜູ້ທີ່ໃຫ້ຄວາມລອດພົ້ນໃຫ້ຄົນ
ເຮົາຕາມພຣະປະສົງຂອງພຣະເຈົ້າ ກັບ ພຣະເຢຊູຄຣິດ ຜູ້ເປັນຄວາມຫວັງອັນ
ໝັ້ນຄົງຂອງຄົນເຮົານຳ

1:2 ເຖິງ ຕີໂມທຽວ ລູກຂ້ອຍເອງທາງຄວາມເຊື່ອ ຂໍພຣະກະລຸນາທິຄຸນ ຄວາມ
ເມດຕາ ກັບຄວາມສະຫງົບສຸກ ຈາກພຣະເຈົ້າຜູ້ເປັນພໍ່ ກັບຈາກພຣະເຢຊູຄຣິດ-
ເຈົ້າຂອງຄົນເຮົາ *ດຳລົງຢູ່ກັບເຈົ້າເດີ້*
1:3 ຄືຕາມທີ່ຂ້ອຍໄດ້ສັ່ງການໄວ້ໃຫ້ເຈົ້າຕອນຂ້ອຍໄປເຂດ ມາເກໂດເນຍ ນັ້ນ ໃຫ້
ເຈົ້າຢູ່ເມືອງ ເອເຟໂຊ ໄວ້ກ່ອນເດີ້ ເພື່ອເຈົ້າຊິໄດ້ສັ່ງຫ້າມຜູ້ລາງຄົນຢູ່ນັ້ນ ບໍ່ໃຫ້
ເຂົາສອນເລື່ອງຄວາມເຊື່ອແນວອື່ນໆ ອີກຕໍ່ໄປ
1:4 ກັບບໍ່ໃຫ້ເຂົາສົນໃຈໃນເລື່ອງນິຍາຍຕ່າງໆ ກັບເລື່ອງລາຍຊື່ວົງຕະກູນຍາວໆ
ອັນບໍ່ຮູ້ຈັກຈົບ ຊຶ່ງແນວໝູ່ນີ້ໃຫ້ເກີດການໂຕ້ຖຽງກັນ ແທນທີ່ຊິສົ່ງເສີມຄວາມເຊື່ອ
ຂອງພີ່ນ້ອງ ອັນເປັນທີ່ຖວາຍກຽດພຣະເຈົ້າ
1:5 ຄືຈຸດເປົ້າໝາຍຂອງກົດບັນຍັດຂອງພຣະເຈົ້າກໍຄື ໃຫ້ມີຄວາມຮັກຈາກໃຈບໍລິ-
ສຸດ ມີຈິດສຳນຶກຜິດຊອບຜ່ອງໃສດີ ກັບມີຄວາມເຊື່ອຢ່າງນ້ຳໃສໃຈຈິງ
1:6 ຊຶ່ງຜູ້ລາງຄົນໄດ້ຫລົງທາງໄປແລ້ວ ຫັນອອກໄປ ເວົ້າແຕ່ແນວມັນບໍ່ແມ່ນ
1:7 ຄືໃນຂະນະທີ່ພວກເຂົາຢາກເປັນຄູສອນກົດບັນຍັດ ເຂົາກໍຍັງຮູ້ເທົ່າບໍ່ເຖິງສະ-
ພາບການ ໃນແນວທີ່ເຂົາຢືນຢັນໄວ້ນັ້ນ
1:8 ແຕ່ພວກເຮົາຮູ້ຢູ່ວ່າ ກົດບັນຍັດນັ້ນກໍດີໝົດຄູ່ຂໍ້ ຄັນຊິຮູ້ຈັກການໃຊ້ໃຫ້ຖືກຕ້ອງ
1:9 ໂດຍຮູ້ກັນແລ້ວວ່າ ກົດບັນຍັດນັ້ນບໍ່ມີໄວ້ສຳລັບຄົນຊອບທຳດີພ້ອມ ແຕ່ມີໄວ້
ສຳລັບຄົນນອກກົດເກນ ຄົນດື້ດ້ານບໍ່ຍອມເຊື່ອຟັງ ຄົນໝິ່ນປະມາດພຣະເຈົ້າ ຄົນ
ຂີ້ບາບ ຄົນບໍ່ບໍລິສຸດ ຄົນຫຍາບຄາຍ ຄົນຂ້າພໍ່ຂ້າແມ່ ຄົນຂ້າເພື່ອນມະນຸດ
1:10 ແລ້ວສຳລັບຄົນຊົ່ວຊ້າເລວຊາມທີ່ຄ້າປະເວນີ ຄົນທີ່ສົມສູ່ຮ່ວມເພດດຽວກັນ
ຄົນຜູ້ຮ້າຍລັກຄົນ ຄົນຄ້າຂາຍຂ້າທາດ ຄົນຂີ້ຕົວະ ຄົນໃຫ້ຄຳພະຍານເທັດ ກັບ
ພວກຄົນອື່ນໆ ທີ່ຂັດກັນກັບຫລັກຄວາມເຊື່ອທີ່ຖືກຕ້ອງ
1:11 ອັນນີ້ກໍເປັນຕາມຂ່າວປະເສີດອັນປະກອບດ້ວຍຄວາມສະຫງ່າຂອງພຣະເຈົ້າ
ຜູ້ມີກຽດ ທີ່ໄດ້ມອບ ໝາຍໄວ້ກັບຂ້ອຍນີ້
1:12 ແລ້ວຂ້ອຍຂອບໃຈພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງພວກເຮົາ ຜູ້ເພິ່ນທີ່ໃຫ້
ກຳລັງຂ້ອຍ ໂດຍວ່າເພິ່ນຖືວ່າຂ້ອຍເປັນຄົນສັດຊື່ພັກດີ ຈັ່ງໄດ້ຕັ້ງຂ້ອຍໄວ້ໃຫ້-
ເປັນຜູ້ຮັບໃຊ້ຂອງເພິ່ນ

1:13 ແມ່ນແຕ່ຂ້ອຍເຄີຍເປັນຄົນໝິ່ນປະມາດ ຄົນຂົ່ມເຫງທຳລາຍ ຄົນຜະຫຍອງ
ອວດດີ ແຕ່ຂ້ອຍໄດ້ຮັບຄວາມເມດຕາປານີຈາກພຣະເຈົ້າ ຍ້ອນວ່າຂ້ອຍໄດ້ເຮັດ
ຢ່າງໂງ່ໆ ບໍ່ມີຄວາມເຊື່ອ
1:14 ແຕ່ພຣະຜູ້ເປັນເຈົ້າຂອງພວກເຮົາໄດ້ສະແດງພຣະກະລຸນາທິຄຸນຢ່າງເຫລືອ-
ລົ້ນໃຫ້ກັບໂຕຂ້ອຍ ພ້ອມທັງຄວາມເຊື່ອກັບຄວາມຮັກທີ່ມີຢູ່ໃນອົງ ພຣະເຢຊູ-
ຄຣິດ
1:15 ຖ້ອຍຄຳນີ້ກໍເປັນຄຳສັດຈິງ ແລ້ວກໍເປັນທີ່ສົມຄວນຍອມຮັບໄວ້ ວ່າ ພຣະເຢຊູ-
ຄຣິດ ໄດ້ສະເດັດເຂົ້າມາໃນໂລກເພື່ອຊິໂປດເມດຕາຄົນບາບໃຫ້ລອດພົ້ນ ຊຶ່ງ
ຂ້ອຍນີ້ເປັນ *ບາບ* ໂຕເອກ
1:16 ຈັ່ງໃດກໍຕາມ ຍ້ອນເຫດນີ້ເນາະ ຂ້ອຍໄດ້ຮັບຄວາມເມດຕາ ເພື່ອວ່າ ພຣະເຢ-
ຊູຄຣິດ ຊິໄດ້ສະແດງຄວາມອົດທົນພາກພຽນຄູ່ຢ່າງຂອງເພິ່ນໄວ້ໃນໂຕຂ້ອຍ
ກ່ອນ ເພື່ອເປັນແບບຢ່າງຕໍ່ຄົນທັງຫລາຍ ທີ່ຊິຮັບເຊື່ອໃນເພິ່ນພາຍຫລັງ ຈັ່ງໄດ້
ຊີວິດອັນຕະຫລອດໄປເປັນນິດ
1:17 ບັດນີ້ ຂໍພຣະກຽດກັບສັກສີຈົ່ງມີແດ່ ພຣະມະຫາກະສັດ ຜູ້ດຳລົງຢູ່ຕະ-
ຫລອດການເປັນນິດຊຶ່ງບໍ່ຮູ້ຈັກຕາຍ ຜູ້ທີ່ຕາບໍ່ເຫັນ ຜູ້ເປັນພຣະເຈົ້າທີ່ມີພຣະປັນ-
ຍາແຕ່ອົງດຽວ ມີບາລະມີ ມີສະຫງ່າລາສີ ສືບໆ ໄປຕະຫລອດໄປເປັນນິດ ອາ-
ເມນ
1:18 ຕີໂມທຽວ ລູກເອີຍ ຄຳສັ່ງນີ້ຂ້ອຍມອບໄວ້ໃຫ້ກັບເຈົ້າຕາມຄຳທຳນາຍທີ່ມີໄວ້
ກ່ອນມາເຖິງເຈົ້າ ເພື່ອເຈົ້າຊິໄດ້ເຮັດສົງຄາມຝ່າຍວິນຍານໄດ້ດີ ຕາມຄຳທຳນາຍ
ນັ້ນ
1:19 ດ້ວຍຄວາມເຊື່ອ ດ້ວຍຈິດສຳນຶກຜິດຊອບອັນຜ່ອງໃສດີ ຊຶ່ງຜູ້ລາງຄົນໄດ້ປິດ
ຖິ້ມ ແລ້ວໃນທີ່ສຸດຄວາມເຊື່ອຂອງເຂົາຈັ່ງພັງທະລາຍຄືເຮືອແຕກຈົມລົງ
1:20 ຊຶ່ງໃນພວກນີ້ກໍມີ ຮີເມນາໂຢ ກັບ ອາເລັກຊັນໂດ ທີ່ຂ້ອຍໄດ້ມອບໄວ້ກັບ
ພະຍາມານຊາຕານແລ້ວ ເພື່ອຊິເປັນບົດຮຽນບໍ່ໃຫ້ເຂົາໝິ່ນປະມາດທຳລາຍຕໍ່ໄປ
ອີກ

# 1 ຕີໂມທຽວ ບົດທີ 2

2:1 ຈັ່ງຊັ້ນ ກ່ອນແນວອື່ນ ຂ້ອຍຈັ່ງແນະນຳໃຫ້ວິງວອນ ອະທິຖານ ກັບຂໍຮ້ອງເພື່ອ
ໝົດຄູ່ຄົນ ພ້ອມທັງຂອບໃຈພຣະເຈົ້ານຳ
2:2 ໂດຍສະເພາະເພື່ອກະສັດກັບຜູ້ມີອຳນາດຄູ່ຄົນ ເພື່ອວ່າບ້ານເມືອງພວກເຮົາຊິ
ໄດ້ໃຊ້ຊີວິດຢູ່ຢ່າງງຽບສະຫງົບ ໃນທາງບໍລິສຸດດີງາມ ເປັນທີ່ຖວາຍກຽດພຣະເຈົ້າ
2:3 ຄືອັນນີ້ກໍເປັນທີ່ດີງາມ ເປັນທີ່ຍອມຮັບໃນສາຍຕາຂອງພຣະເຈົ້າ ພຣະຜູ້ໂຜດ
ຂອງຄົນເຮົາທັງຫລາຍ
2:4 ຜູ້ເພິ່ນປາດຖະໜາຢາກໃຫ້ໝົດຄູ່ຄົນລອດພົ້ນ ກັບມາຮູ້ຈັກເຖິງເລື່ອງຄວາມ-
ຈິງ
2:5 ໂດຍວ່າ ມີພຣະເຈົ້າທ່ຽງແທ້ແຕ່ຜູ້ດຽວ ກັບມີຄົນກາງລະຫວ່າງພຣະເຈົ້າກັບ
ມະນຸດສະຊາດແຕ່ຜູ້ດຽວ ຄືອົງພຣະເຢຊູຄຣິດເຈົ້າ ຜູ້ມາຮັບສະພາບເປັນມະນຸດ
2:6 ຜູ້ເພິ່ນໄດ້ອຸທິດຊີວິດຂອງເພິ່ນມາເປັນເຄື່ອງບູຊາ ເພື່ອໄຖ່ຄົນໝົດທັງປວງ ຊຶ່ງ
ເຫດການນີ້ໄດ້ປາກົດ ເຖິງມີການເປັນພະຍານໃນເວລາອັນເໝາະສົມ
2:7 ຊຶ່ງວ່າ ຂ້ອຍນີ້ ໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ປະກາດ ເປັນທູດພິເສດ ກັບເປັນ
ຄູສອນຄົນຕ່າງຊາດ ໃນເລື່ອງຄວາມເຊື່ອກັບຄວາມຈິງ ທີ່ຂ້ອຍເວົ້ານີ້ກໍແມ່ນ
ຄວາມຈິງໃນ ພຣະຄຣິດ ໝົດ ຂ້ອຍບໍ່ໄດ້ຕົວະ
2:8 ຈັ່ງຊັ້ນ ຂ້ອຍຈັ່ງປາດຖະໜາຢາກໃຫ້ຜູ້ຊາຍຢູ່ຄູ່ໝ້ອງອະທິຖານຕໍ່ພຣະເຈົ້າ ຍົກ
ມືບໍລິສຸດຜ່ອງແຜ້ວ *ຕໍ່ໜ້າເພິ່ນ* ໂດຍບໍ່ມີການຄຽດຮ້າຍຫລືການສົງໄສເລີຍ
2:9 ໃນທຳນອງດຽວກັນ ໃຫ້ພວກແມ່ຍິງແຕ່ງໂຕສຸພາບຮຽບຮ້ອຍ ໂດຍອາໄສ
ຄວາມເໝາະສົມ ສະຫງ່ຽມ ຈຽມຕົວເປັນເຄື່ອງປະດັບ ຮູ້ຈັກການຄວບຄຸມຕົວເອງ
ບໍ່ແມ່ນອາໄສການເປຍຜົມ ຫລືເຄື່ອງເງິນທອງໄຂ່ມຸກ ຫລືພວກເສື້ອຜ້າລາຄາ
ແພງໆ
2:10 ຄື ສຳລັບຍິງທີ່ປະກາດຊີວິດວ່າເປັນທີ່ຖວາຍກຽດພຣະເຈົ້ານັ້ນ ຄວນຊິປະດັບ
ຊີວິດຂອງໂຕໂດຍການກະທຳອັນດີງາມ
2:11 ສຳລັບພວກແມ່ຍິງ ກໍໃຫ້ຮຽນຮູ້ດ້ວຍຄວາມງຽບສະຫງົບ ອ່ອນນ້ອມໃນຄູ່ຢ່າງ

2:12 ແລ້ວຂ້ອຍບໍ່ອະນຸຍາດໃຫ້ແມ່ຍິງສັ່ງສອນ ຫລືມີອຳນາດໃດໆ ເໜືອຜູ້ຊາຍ *ໃນ
ດ້ານຄວາມເຊື່ອ* ແຕ່ໃຫ້ມີໃຈ *ອ່ອນນ້ອມ* ງຽບສະຫງົບເດີ້
2:13 ຄື ພຣະເຈົ້າໄດ້ສ້າງ ອາດັມ *ຜູ້ເປັນພໍ່ມະນຸດ* ໄວ້ກ່ອນ ແລ້ວຈັ່ງສ້າງ ນາງ
ເອວາ *ຜູ້ເປັນແມ່ເດີມມະນຸດ* ມານຳຫລັງ
2:14 ຄືຝ່າຍ ອາດັມ ລາວ ບໍ່ໄດ້ຫລົງຜິດໃນການຫລອກລວງ ແຕ່ວ່າແມ່ຍິງນັ້ນ
ເປັນຜູ້ທີ່ໄດ້ຫລົງຜິດລ່ວງລະເມີດໄປໃນການຫລອກລວງ
2:15 ຈັ່ງໃດກໍຕາມ ພວກແມ່ຍິງກໍຍັງຊິລອດໄດ້ໃນຍາມອອກລູກ ຄັ່ນເຂົາຕັ້ງໂຕຢູ່
ສະເໝີໃນຄວາມເຊື່ອ ໃນຄວາມຮັກ ກັບໃນຄວາມບໍລິສຸດ ດ້ວຍຄວາມສະຫງ່ຽມ
ຈຽມຕົວ

## 1 ຕີໂມທຽວ ບົດທີ 3

3:1 ຖ້ອຍຄຳນີ້ເປັນຄຳສັດຈິງ ຄືຄັ່ນວ່າ ຜູ້ຊາຍຄົນໃດປາດຖະໜາຢາກເປັນຜູ້ເບິ່ງ-
ແຍງ *ໃນກຸ່ມຜູ້ເຊື່ອ* ຜູ້ນັ້ນໄດ້ປາດຖະໜາການງານດີ
3:2 ຜູ້ເບິ່ງແຍງນັ້ນ ຕ້ອງບໍ່ມີທີ່ຕິວ່າກ່າວໄດ້ ມີໃຈໃຫ້ເມຍຜູ້ດຽວ ເປັນຄົນຮູ້ຈັກຄວບ
ຄຸມໂຕເອງ ເປັນຄົນມີສະຕິຮູ້ຈັກປະມານໂຕ ເປັນຄົນມີການປະພຶດຮຽບຮ້ອຍດີ
ເປັນຄົນມັກຕ້ອນຮັບແຂກ ສາມາດເປັນຄູສອນໄດ້
3:3 ເປັນຄົນບໍ່ຕິດເຫລົ້າອະງຸ່ນ ບໍ່ເປັນຄົນມັກເລງຫົວໄມ້ ບໍ່ເປັນຄົນເຫັນແກ່ເງິນແກ່
ໄດ້ ແຕ່ວ່າເປັນຄົນອ່ອນສຸພາບ ບໍ່ເປັນຄົນມັກຫາເລື່ອງອາລະວາດ
3:4 ເປັນຄົນຮູ້ຈັກປົກຄອງເຮືອນຂອງໂຕເອງໃຫ້ຮຽບຮ້ອຍດີງາມ ມີລູກເຕົ້າທີ່ຮູ້ຈັກ
ເຊື່ອຟັງດ້ວຍຄວາມສະຫງ່າຜ່າເຜີຍ
3:5 (ຄື ຄັ່ນວ່າຜູ້ຊາຍຄົນໃດບໍ່ຮູ້ຈັກການປົກຄອງເຮືອນຂອງໂຕເອງ ເຂົາກໍຊິເບິ່ງ-
ແຍງກຸ່ມຜູ້ເຊື່ອຂອງພຣະເຈົ້າໄດ້ຈັ່ງໃດ)
3:6 ແລ້ວບໍ່ແມ່ນຄົນເຊື່ອໃໝ່ໆ ບໍ່ຊັ້ນເຂົາ ອາດ ຊິເກີດການຈອງຫອງຂຶ້ນມາ ແລ້ວ
ຊິລົ້ມລົງຕົກຢູ່ໃນສະພາບການຕັດສິນຄືກັນກັບພະຍາມານຊາຕານນັ້ນເອງ
3:7 ຫລາຍກວ່ານັ້ນອີກ ຜູ້ຊາຍຜູ້ນັ້ນຊິຕ້ອງມີຊື່ສຽງດີກັບຄົນພາຍນອກນຳ ເພື່ອ
ເຂົາຊິບໍ່ຖືກຕິຕຽນເວົ້າໃສ່ ຈັ່ງຕົກຢູ່ໃນກັບດັກຂອງພະຍາມານຊາຕານ

3:8 ແລ້ວເຊັ່ນກັນ ຜູ້ຊາຍຜູ້ໃດທີ່ຊິເປັນຜູ້ຊ່ອຍງານຜູ້ເບິ່ງແຍງ ກໍຕ້ອງເປັນຄົນມີນິ-
ໄສຄວນນັບຖື ເວົ້າແຕ່ແນວຈິງໃຈ ບໍ່ເປັນຄົນສອງລີ້ນ ບໍ່ເປັນຄົນຕິດເຫລົ້າອະງຸ່ນ
ບໍ່ເປັນຄົນຂີ້ໂລບເງິນເຫັນແກ່ໄດ້
3:9 ແຕ່ເປັນຄົນຖືເອົາຖືໃນຂໍ້ລ້ຳເລີກຂອງຄວາມເຊື່ອ ມີຈິດສຳນຶກຜິດຊອບສະ-
ອາດຜ່ອງໃສ
3:10 ແລ້ວຄົນໝູ່ນີ້ກໍໃຫ້ພິສູດເບິ່ງກ່ອນ ຈັ່ງຊິປ່ອຍມີໃຫ້ຮັບໃຊ້ງານຜູ້ຊ່ອຍ ຄັ່ນເຫັນ
ວ່າບໍ່ມີທີ່ຕິວ່າກ່າວໄດ້
3:11 ຝ່າຍເມຍຂອງເຂົາກໍຄືກັນ ຕ້ອງເປັນຄົນມີນິໄສຄວນນັບຖື ບໍ່ເປັນຄົນໃສ່ຮ້າຍ
ທາສີ ແຕ່ວ່າເປັນ ຍິງທີ່ມີສະຕິອ້ອມຄອບ ຮູ້ຈັກການຄວບຄຸມຕົວເອງ ສັດຊື່ເຊື່ອ
ໃຈໄດ້ໃນໝົດຄູ່ແນວ
3:12 ແລ້ວໃຫ້ຜູ້ຊ່ອຍງານຜູ້ເບິ່ງແຍງ ມີໃຈໃຫ້ເມຍຜູ້ດຽວ ຮູ້ຈັກຝຶກສອນລູກເຕົ້າ
ປົກຄອງເຮືອນຂອງໂຕເອງໃຫ້ຮຽບຮ້ອຍດີ
3:13 ຄືຜູ້ທີ່ເຄີຍຮັບໃຊ້ງານຜູ້ຊ່ອຍໄດ້ດີ ກໍໄດ້ຖານະດີງາມໃຫ້ໂຕເອງ ມີໃຈກ້າ
ຫລາຍໃນທາງຄວາມເຊື່ອ ຊຶ່ງຢູ່ໃນ ພຣະເຢຊູຄຣິດ
3:14 ຂໍ້ຄວາມແນວໝູ່ນີ້ ຂ້ອຍຂຽນຝາກມາຍັງເຈົ້າໄວ້ກ່ອນ ຫວັງວ່າຊິໄດ້ມາຫາໃນ
ໄວໆ ນີ້
3:15 ແລ້ວຄັ່ນວ່າຂ້ອຍມາຊ້າ ຂ້ອຍໄດ້ຂຽນແນວນີ້ກໍເພື່ອເຈົ້າຊິຮູ້ວ່າຄວນຊິປະຕິ-
ບັດໂຕແບບໃດຢູ່ໃນເຮືອນຂອງພຣະເຈົ້າ ຊຶ່ງເປັນກຸ່ມຜູ້ເຊື່ອຂອງພຣະເຈົ້າຜູ້ດຳ-
ລົງຢູ່ ຊຶ່ງເປັນຫລັກເປັນພື້ນຖານແຫ່ງຄວາມຈິງ
3:16 ຄື ມັນເປັນທີ່ຍອມຮັບກັນວ່າ ຂໍ້ລ້ຳເລີກເລື່ອງພຣະເຈົ້າກໍວິເສດຢ່າງຍິ່ງ ຊຶ່ງ
ພຣະເຈົ້າໄດ້ສະເດັດລົງມາຮັບສະພາບມີເນື້ອໜັງເປັນຄົນ ພິສູດວ່າເປັນຜູ້ຊອບ-
ທຳໂດຍທາງ ພຣະວິນຍານ ໝູ່ເທວະທູດໄດ້ເຫັນ ແລ້ວໄດ້ຮັບການປະກາດຕໍ່ຄົນ
ຕ່າງຊາດ ມີຄົນໄດ້ຮັບເຊື່ອໃນໂລກ ແລ້ວເພິ່ນຖືກຮັບຂຶ້ນສູ່ຄວາມສະຫງ່າອັນຮຸ່ງ-
ເຮືອງ

# 1 ຕີໂມທຽວ ບົດທີ 4

4:1 ໃນບັດນີ້ ພຣະວິນຍານ ໄດ້ກ່າວໄວ້ຢ່າງຊັດເຈນວ່າ ໃນອະນາຄົດທາງໜ້າຊິມີ
ຜູ້ລາງຄົນຫລົງຈາກທາງຄວາມເຊື່ອ ຫັນໄປຫລົງເຊື່ອພວກວິນຍານທີ່ຫລອກ-
ລວງ ກັບຄຳສອນຂອງພວກ ພະຍາມານ
4:2 ແມ່ນພວກນັ້ນ ທີ່ເວົ້າຄວາມບໍ່ຈິງຢ່າງໜ້າໄຫວ້ຫລັງຫລອກ ຄືຈິດສຳນຶກຜິດ-
ຊອບຂອງເຂົາຖືກດາດດ້ວຍເຫລັກຮ້ອນໆ
4:3 ພວກນີ້ສອນຫ້າມບໍ່ໃຫ້ແຕ່ງງານ ກັບສັ່ງໃຫ້ຍົກເວັ້ນບໍ່ໃຫ້ກິນອາຫານລາງແນວ
ຊຶ່ງເປັນອາຫານທີ່ພຣະເຈົ້າໄດ້ສ້າງໄວ້ ເພື່ອໃຫ້ຄົນທີ່ເຊື່ອແລ້ວຮູ້ຈັກຄວາມຈິງ ຈັ່ງ
ຮັບກິນໂດຍການຂອບໃຈ
4:4 ຄື ຄູ່ແນວທີ່ພຣະເຈົ້າໄດ້ສ້າງໄວ້ກໍດີງາມໝົດ ບໍ່ຕ້ອງປະຕິເສດເວັ້ນໄວ້ຈັກແນວ
ຄັ່ນຮັບເອົາໂດຍການຂອບໃຈ
4:5 ຄືແນວກິນນັ້ນໄດ້ຮັບການຊຳລະໃຫ້ບໍລິສຸດ ໂດຍ ພຣະຄຳ ຂອງພຣະເຈົ້າກັບ
ການອະທິຖານ
4:6 ຄັ່ນເຈົ້າແນະນຳພີ່ນ້ອງໃນຂໍ້ຄວາມແນວໝູ່ນີ້ ເຈົ້າກໍຊິເປັນຜູ້ຮັບໃຊ້ທີ່ດີຂອງ
ພຣະເຢຊູຄຣິດ ໄດ້ຮັບການລ້ຽງຈະເລີນດ້ວຍ ພຣະຄຳ ແຫ່ງຄວາມເຊື່ອ ກັບ
ດ້ວຍຫລັກຄຳສອນທີ່ດີ ຊຶ່ງເຈົ້າໄດ້ເອົາໃຈໃສ່ຢ່າງຈິງຈັງ
4:7 ແຕ່ວ່າ ໃຫ້ປະຕິເສດນິທານອັນບໍ່ເປັນສາລະ ກັບຄວາມເຊື່ອຖືແປກໆ ຂອງຍິງ
ຊະລາເດີ້ ແລ້ວໃຫ້ຝຶກຝົນຊີວິດຂອງໂຕເອງໃນທາງທີ່ໃຫ້ກຽດພຣະເຈົ້າເດີ້
4:8 ໂດຍວ່າ ການຝຶກຝົນອອກກຳລັງທາງກາຍກໍໄດ້ກຳໄລແດ່ ແຕ່ການຝຶກຝົນໃນ
ທາງທີ່ຖວາຍກຽດພຣະເຈົ້າກໍໄດ້ປຽບໃນໝົດຄູ່ທາງ ຕາມຄຳສັນຍາທີ່ວ່າ ຊິໄດ້
ເປັນປະໂຫຍດທັງໃນຊີວິດປະຈຸບັນ ກັບໃນອະນາຄົດທີ່ຊິມາ
4:9 ຖ້ອຍຄຳນີ້ເປັນຄຳສັດຈິງ ແລ້ວສົມຄວນຊິເປັນທີ່ຍອມຮັບໝົດຄູ່ຢ່າງ
4:10 ຄືວ່າ ໂດຍເຫດນີ້ພວກເຮົາໄດ້ເຮັດງານຮັບໃຊ້ພຣະເຈົ້າ ພ້ອມທັງທົນເອົາຕໍ່
ການດູໝິ່ນ ຍ້ອນວ່າພວກເຮົາຫາກໍ່ຫວັງໃນພຣະເຈົ້າຜູ້ເພິ່ນດຳລົງຢູ່ ຜູ້ຊຶ່ງເປັນທີ່
ລອດພົ້ນຂອງຄົນທັງປວງ ໂດຍສະເພາະຄົນທັງຫລາຍທີ່ຮັບເຊື່ອ
4:11 ຂໍ້ຄວາມແນວໝູ່ນີ້ໃຫ້ສັ່ງສອນໃຫ້ດີເດີ້

4:12 ແລ້ວຢ່າຍອມໃຫ້ຜູ້ໃດດູໝິ່ນເຈົ້າຍ້ອນອາຍຸໜຸ່ມເດີ້ ແຕ່ໃຫ້ເຈົ້າເປັນແບບຢ່າງ
ຕໍ່ຜູ້ເຊື່ອ ໃນດ້ານຄໍາເວົ້າຄໍາຈາ ການປະພຶດຄວາມເປັນຢູ່ ຄວາມຮັກ ນິໄສໃຈຄໍ
ຄວາມເຊື່ອ ກັບຄວາມບໍລິສຸດ
4:13 ແລ້ວໃຫ້ເອົາໃຈໃສ່ເດີ້ ໃນການອ່ານ ພຣະຄໍາ ຮ່ວມກັນຟັງ ໃນການແນະນໍາ
ໜຸນໃຈ ກັບໃນການບອກສອນ ຈົນກວ່າຂ້ອຍມາຮອດ
4:14 ແລ້ວຢ່າເສີຍເມີຍຕໍ່ພົນສະຫວັນພິເສດເດີ້ ຊຶ່ງມີຢູ່ໃນໂຕເຈົ້ານັ້ນ ທີ່ພຣະເຈົ້າ
ໄດ້ໂຜດປະທານໃຫ້ເຈົ້າຕາມຄໍາທໍານາຍ ຕອນພວກຜູ້ຫລັກຜູ້ໃຫຍ່ໄດ້ວາງມືເຈີມ
ເຈົ້ານັ້ນ
4:15 ໃຫ້ຈົດຈໍ່ເອົາໃຈໃສ່ໃນຂໍ້ຄວາມແນວໝູ່ນີ້ເດີ້ ເພື່ອຄວາມຈະເລີນກ້າວໜ້າຂອງ
ເຈົ້າຊິໄດ້ປາກົດຕໍ່ໝົດຄູ່ຄົນ
4:16 ໃຫ້ຄອຍຖ້າລະວັງໂຕເອງກັບຫລັກຄວາມເຊື່ອໄວ້ໃຫ້ດີເດີ້ ໃຫ້ຢູ່ຄືເດີມໄວ້
ຊຶ່ງການເຮັດຈັ່ງຊີ້ຊິໄດ້ຮັບຮອງໂຕເຈົ້າໄວ້ ພ້ອມທັງຄູ່ຄົນທີ່ຮັບຟັງ ໃຫ້ໝັ້ນຄົງໃນ
ແນວທາງຄວາມລອດພົ້ນເດີ້

## 1 ຕີໂມທຽວ ບົດທີ 5

5:1 ຢ່າສູ່ຕິຕຽນພໍ່ເຖົ້າ ແຕ່ໃຫ້ໜຸນໃຈແນະນໍາເຂົາສໍ່າເປັນພໍ່ເດີ້ ແລ້ວໃຫ້ເຮັດນໍາຜູ້-
ຊາຍທີ່ອາຍຸນ້ອຍກວ່າ ສໍ່າເປັນອ້າຍເປັນນ້ອງກັນ
5:2 ແລ້ວສ່ວນພວກແມ່ເຖົ້າ ກໍໃຫ້ເຮັດນໍາສໍ່າເປັນແມ່ ກັບເຮັດນໍາພວກຍິງສາວ
ໂດຍໃຈບໍລິສຸດ ສໍ່າເປັນນ້ອງໆ
5:3 ແລ້ວຝ່າຍແມ້ໝ້າຍນັ້ນ ກໍໃຫ້ກຽດເຂົາ ຄືຜູ້ທີ່ເປັນແມ້ໝ້າຍທີ່ທຸກຍາກລໍາບາກ
ອີຫລີ
5:4 ແຕ່ສໍາລັບແມ້ໝ້າຍຜູ້ທີ່ມີລູກມີຫລານ ກໍໃຫ້ລູກຫລານນັ້ນຮຽນຝຶກໃນການເຮັດ
ຄຸນງາມຄວາມດີໃນເຮືອນເຈົ້າຂອງກ່ອນ ຄືໃຫ້ເຂົາລ້ຽງເບິ່ງແມ່ ຊຶ່ງເປັນການໃຫ້
ກຽດຕອບສະໜອງບຸນຄຸນພໍ່ແມ່ໂຕເອງ ການເຮັດຈັ່ງຊີ້ກໍເປັນການດີ ກັບເປັນທີ່
ຍອມຮັບຕໍ່ໜ້າພຣະເຈົ້າ
5:5 ສ່ວນຜູ້ທີ່ເປັນແມ້ໝ້າຍອີຫລີນັ້ນ ຖືກປະໄວ້ຢູ່ແຕ່ຜູ້ດຽວ ມີແຕ່ຫາກໍ່ຫວັງໃນ
ພຣະເຈົ້າ ອະທິຖານວອນຂໍຕໍ່ເພິ່ນທັງກາງເວັນກັບກາງຄືນ *ກໍໃຫ້ຊ່ອຍເຂົາ*

5:6 ແຕ່ວ່າສຳລັບແມ້ໝ້າຍຜູ້ທີ່ມັກຫາຢູ່ໃນຄວາມສະໜຸກສະໜານທາງຝ່າຍໂລກ
ຜູ້ນັ້ນກໍຢູ່ໃນສະພາບຕາຍໄປແລ້ວທັງໆ ທີ່ຍັງມີຊີວິດຢູ່
5:7 ຂໍ້ຄວາມແນວໝູ່ນີ້ໃຫ້ສັ່ງສອນບອກກັນໄວ້ເດີ້ ເພື່ອພວກເຂົາຊິບໍ່ມີທີ່ຕິວ່າກ່າວ
ໄດ້
5:8 ແຕ່ຄັ່ນແມ່ນວ່າຜູ້ໃດບໍ່ລ້ຽງເບິ່ງຍາດພີ່ນ້ອງ ໂດຍສະເພາະຄົນໃນເຮືອນເຈົ້າ
ຂອງເອງ ຜູ້ນັ້ນກໍໄດ້ປະຕິເສດຫລັກຄວາມເຊື່ອໄປແລ້ວ ແລ້ວເຂົາກໍແຮງຊົ່ວ
ຫລາຍກວ່າຄົນທີ່ຍັງບໍ່ທັນໄດ້ຮັບເຊື່ອອີກຊໍ້າ
5:9 ສ່ວນລາຍຊື່ແມ້ໝ້າຍນັ້ນ ໃຫ້ຮັບໄວ້ແຕ່ຜູ້ທີ່ມີອາຍຸບໍ່ຕໍ່າກວ່າຫົກສິບປີ ທີ່ເຄີຍ
ເປັນເມຍຂອງຜົວຜູ້ດຽວເທົ່ານັ້ນ
5:10 ແລ້ວຄັ່ນວ່າແມ້ໝ້າຍນັ້ນເປັນຜູ້ມີຊື່ສຽງດີ ຄືຄັ່ນເຄີຍເຮັດຄວາມດີຫລາຍແນວ
ເຄີຍລ້ຽງລູກລ້ຽງເຕົ້າ ເຄີຍຕ້ອນຮັບແຂກດີ ເຄີຍຮັບໃຊ້ພີ່ນ້ອງຄົນຂອງພຣະເຈົ້າ
ເຄີຍບັນເທົາທຸກຊ່ອຍຄົນຕົກທຸກໄດ້ຍາກ ກັບເຄີຍປະຕິບັດຕິດຕາມຄຸນງາມ
ຄວາມດີຄູ່ແນວ *ກໍໃຫ້ຊ່ອຍເຂົາ*
5:11 ແຕ່ວ່າຢ່າຮັບແມ້ໝ້າຍທີ່ມີອາຍຸນ້ອຍກວ່າເດີ້ ຄືບັດຍາມເຂົາເກີດທ່າງໆ ຈາກ
ພຣະຄຣິດ ເຂົາກໍຊິຄຶດຢາກແຕ່ງງານເອົາຜົວອີກ
5:12 ແລ້ວເຂົາກໍຊິຖືກວ່າກ່າວຫາໃສ່ ຍ້ອນເຂົາໄດ້ເສຍສັດຕໍ່ຄວາມເຊື່ອຖືອັນທໍາ-
ອິດຂອງເຂົາ
5:13 ນອກຈາກນັ້ນເຂົາມັກຊິຂີ້ຄ້ານ ທ່ຽວຫລິ້ນແຕ່ເຮືອນນັ້ນເຮືອນນີ້ ແລ້ວບໍ່ວ່າແຕ່
ຂີ້ຄ້ານ ເຂົາກໍມັກປາກບອນນໍາ ຫຍຸ້ງແຕ່ເລື່ອງຂອງຜູ້ອື່ນ ເວົ້າພື້ນເວົ້າຂວັນແນວ
ທີ່ເຂົາບໍ່ຄວນເວົ້າ
5:14 ຈັ່ງຊັ້ນ ຂ້ອຍຈັ່ງແນະນໍາຢາກໃຫ້ພວກແມ້ໝ້າຍທີ່ມີອາຍຸນ້ອຍກວ່າ ແຕ່ງເອົາ
ຜົວໃໝ່ຊະ ຈັ່ງມີລູກມີເຕົ້າ ເບິ່ງແຍງເຮືອນໂຕເອງ ເພື່ອຊິບໍ່ເປີດໂອກາດໃຫ້ຝ່າຍ
ສັດຕູມີແນວເວົ້າຂວັນນິນທາໄດ້
5:15 ຄືມີຜູ້ລາງຄົນໄດ້ຫັນໄປຕິດຕາມພະຍາມານຊາຕານໄປແລ້ວ

5:16 ຄັນຜູ້ເຊື່ອຄົນໃດ ບໍ່ວ່າເປັນຍິງຫລືຜູ້ຊາຍ ທີ່ມີແມ່ເປັນໝ້າຍ ກໍໃຫ້ເຂົາຊ່ອຍ
ບັນເທົາພາລະແມ່ຂອງເຂົາ ຢ່າໃຫ້ເປັນພາລະຂອງກຸ່ມຜູ້ເຊື່ອເດີ້ ເພື່ອຊິໄດ້ປ່ອຍ
ກຸ່ມຜູ້ເຊື່ອໃຫ້ຊ່ອຍບັນເທົາພາລະແມ້ໝ້າຍທີ່ທຸກຍາກລຳບາກອີຫລີ
5:17 ແລ້ວສ່ວນຜູ້ຫລັກຜູ້ໃຫຍ່ທີ່ເບິ່ງແຍງກຸ່ມຜູ້ເຊື່ອໄດ້ດີ ໃຫ້ຖືວ່າຜູ້ນັ້ນສົມຄວນຊິ
ໄດ້ຮັບກຽດເປັນສອງເທົ່າ ໂດຍສະເພາະຜູ້ທີ່ທຸ້ມເທໃນ ພຣະຄຳ ກັບໃນການ
ບອກສອນ
5:18 ຄືຕາມທີ່ມີ ພຣະຄຳ ກ່າວໄວ້ວ່າ “ຢ່າຄອບປາກງົວທີ່ຢ່ຳນວດເຂົ້າໃນລານໃຫ້
ເຈົ້າຂອງ” ກັບວ່າ “ຄົນງານກໍສົມຄວນຊິໄດ້ຮັບຄ່າຈ້າງຂອງໂຕເອງ”
5:19 ແລ້ວຢ່າຟ້າວເຊື່ອຄຳກ່າວຫາຕໍ່ຜູ້ຫລັກຜູ້ໃຫຍ່ຜູ້ໃດເລີຍ ນອກຈາກວ່າຊິມີ
ຫຼັກຖານພະຍານຈາກສອງສາມຄົນທີ່ຮັບຮອງ
5:20 ສ່ວນຜູ້ທີ່ເຮັດຜິດບາບແລ້ວນັ້ນ ກໍໃຫ້ວ່າກ່າວເຂົາຕໍ່ໜ້າຄົນທັງກຸ່ມ ເພື່ອເປັນ
ໂຕຢ່າງໃຫ້ຄົນອື່ນໆ ມີຄວາມເຄົາລົບ
5:21 ຂ້ອຍຂໍສັ່ງເຈົ້າໄວ້ຕໍ່ພຣະເຈົ້າ ກັບຕໍ່ ພຣະເຢຊູຄຣິດ ກັບຕໍ່ໝູ່ເທວະທູດທີ່-
ພຣະເຈົ້າເລືອກໄວ້ນັ້ນ ວ່າໃຫ້ເຈົ້າຮັບໃຊ້ຮັກສາຂໍ້ຄວາມແນວໝູ່ນີ້ໄວ້ໃຫ້ດີເດີ້
ໂດຍບໍ່ມີການເຂົ້າຂ້າງຜູ້ໃດ ຫລືເຮັດອີຫຍັງດ້ວຍການລຳອຽງເລີຍ
5:22 ແລ້ວຢ່າຟ້າວວາງມືເພື່ອແຕ່ງຕັ້ງຜູ້ໃດເລີຍ ກໍເພື່ອບໍ່ມີຫຸ້ນສ່ວນໃນຄວາມຜິດ-
ບາບຂອງຜູ້ອື່ນ ຈົ່ງຮັກສາໂຕເອງໄວ້ໃຫ້ບໍລິສຸດເດີ້
5:23 ແລ້ວເຈົ້າຢ່າສູ່ກິນແຕ່ນ້ຳບໍ່ອີກຕໍ່ໄປ ແຕ່ໃຫ້ໃຊ້ເຫລົ້າອະງຸ່ນດອງຈັກນ້ອຍພໍ
ເປັນຢາຮັກສາກະເພາະຂອງເຈົ້າ ກັບພະຍາດປະຈຳໂຕຂອງເຈົ້ານຳເດີ້
5:24 ສ່ວນຄວາມຜິດບາບຂອງຜູ້ລາງຄົນມັກຊິປາກົດກ່ອນຢ່າງຊັດແຈ້ງ ນຳໜ້າ
ເຂົ້າສູ່ການຕັດສິນ ແຕ່ສ່ວນຜູ້ລາງຄົນ ບາບຂອງເຂົາຊິປາກົດຕາມຫລັງ
5:25 ໃນທຳນອງດຽວກັນ ຄວາມດີຂອງຜູ້ລາງຄົນມັກຊິປາກົດກ່ອນຢ່າງຊັດແຈ້ງ
ແຕ່ສ່ວນອີກຜູ້ລາງຄົນ ຄວາມດີຂອງເຂົາຊິປາກົດຕາມຫລັງ ປິດບັງໄວ້ບໍ່ໄດ້

# 1 ຕີໂມທຽວ ບົດທີ 6

6:1 ສ່ວນຜູ້ຄົນທີ່ຢູ່ໃຕ້ແອກການເປັນຄົນໃຊ້ນັ້ນ ກໍໃຫ້ຖືວ່ານາຍເຈົ້າຂອງສົມຄວນ
ຊິໄດ້ຮັບກຽດໃນໝົດຄູ່ຢ່າງເດີ້ ເພື່ອພຣະນາມຂອງພຣະເຈົ້າກັບຫລັກຄວາມເຊື່ອ
ຂອງເພິ່ນ ຊິບໍ່ຖືກໝິ່ນປະມາດ
6:2 ແລ້ວສ່ວນຄົນໃຊ້ຜູ້ມີນາຍທີ່ຮັບເຊື່ອແລ້ວ ກໍຢ່າໃຫ້ເຂົາດູໝິ່ນນາຍເຈົ້າຂອງເດີ້
ຍ້ອນວ່ານາຍຂອງເຂົາກໍເປັນພີ່ນ້ອງ *ໃນພຣະເຈົ້າ* ແຕ່ໃຫ້ຜູ້ເປັນຄົນໃຊ້ຮັບໃຊ້
ນາຍດີກວ່າ ຍ້ອນວ່າຜູ້ທີ່ຮັບຜົນປະໂຫຍດກໍເປັນພີ່ນ້ອງທີ່ຮັກນຳກັນ ຂໍ້ຄວາມ
ແນວໝູ່ນີ້ກໍໃຫ້ສັ່ງສອນແນະນຳໝຸນໃຈໄວ້ເດີ້
6:3 ຄັ່ນແມ່ນວ່າ ຄົນຜູ້ໃດສອນແນວອື່ນທີ່ຂັດກັນໄປຈາກຂໍ້ຄວາມແນວໝູ່ນີ້ ແລ້ວ
ບໍ່ຍອມຮັບໃນຄຳສອນອັນມີເຫດມີຜົນ ຊຶ່ງເປັນຖ້ອຍຄຳຂອງພຣະເຢຊູຄຣິດເຈົ້າ
ຂອງພວກເຮົາ ກັບເປັນຫລັກຄວາມເຊື່ອຊຶ່ງເປັນທີ່ຖວາຍກຽດພຣະເຈົ້າ
6:4 ຄົນແບບນັ້ນກໍເຫຍື່ອຫຍິ່ງຈອງຫອງ ບໍ່ຮູ້ຈັກອີຫຍັງເລີຍ ມົວແຕ່ໂຕ້ຖຽງໃນຂໍ້
ຂັດແຍ້ງຕ່າງໆ ນີ້ກໍເປັນເຫດໃຫ້ເກີດການອິດສາຂັດເຄືອງໃຈກັນ ເວົ້າໃສ່ຮ້າຍທາ
ສີກັນ ຄຶດຊົ່ວສົງໄສຊຶ່ງກັນແລະກັນ
6:5 ຊຶ່ງເກີດການໂຕ້ແຍ້ງກັນຂອງຄົນໃຈເສື່ອມຊາມໃນແນວທີ່ບໍ່ເປັນປະໂຫຍດ ບໍ່
ມີຫລັກຄວາມຈິງ ຄົນພວກນີ້ເຂົ້າໃຈຜິດກັນວ່າ ການໃຊ້ຊີວິດໃນທາງຖວາຍກຽດ
ພຣະເຈົ້ານັ້ນ ໄດ້ເປັນທາງໄດ້ກຳໄລຫາປະໂຫຍດໃຫ້ໂຕເອງ ໃຫ້ເຈົ້າຖອນໂຕໃຫ້
ພົ້ນຈາກຄົນແບບນີ້ເດີ້ ບໍ່ໃຫ້ຄົບຫາ
6:6 ແຕ່ວ່າການຖວາຍກຽດພຣະເຈົ້າໂດຍຄວາມຄວນພໍໃຈ ກໍເປັນການໄດ້ກຳໄລ
ຫລາຍເປັນຢ່າງຍິ່ງ
6:7 ຄືວ່າ ຄົນເຮົາບໍ່ໄດ້ຂົນເອົາອີຫຍັງເຂົ້າມາໃນໂລກ *ຕອນທີ່ເກີດມາ* ແລ້ວແມ່-
ນອນບັດຍາມເຮົາອອກໄປ ພວກເຮົາຊິບໍ່ສາມາດເອົາອີຫຍັງອອກໄປນຳ
6:8 ຈັ່ງຊັ້ນ ບັດມີແນວຢູ່ແນວກິນແລ້ວ ກໍໃຫ້ພວກເຮົາມີຄວາມຄວນພໍໃຈຢູ່ນຳນັ້ນ
ເດີ້
6:9 ແຕ່ວ່າ ຝ່າຍຄົນທີ່ຢາກຮັ່ງຢາກມີ ຊິຕ້ອງຕົກຢູ່ໃນກັບດັກອັນລໍ້ລວງ ຫລົງໃນ
ຕັນຫາອັນຕະລາຍຫລາຍແນວ ທີ່ດຶງຄົນຈົມລົງສູ່ທາງຈິບຫາຍວາຍວອດ

6:10 ຍ້ອນວ່າ ການຮັກໄຄ່ເງິນທອງນັ້ນກໍເປັນແຫລ່ງໃຫ້ເກີດຄວາມຊົ່ວຄູ່ຢ່າງ ຊຶ່ງຜູ້
ລາງຄົນໄດ້ຫລົງຈາກທາງຄວາມເຊື່ອຍ້ອນຄວາມຂີ້ໂລບຂອງເຂົາ ແລ້ວໃນທີ່ສຸດ
ກໍແທງໃຈໂຕເອງດ້ວຍຄວາມທຸກທໍລະມານຫລາຍແນວ
6:11 ແຕ່ສຳລັບເຈົ້າ ຜູ້ເປັນຄົນຂອງພຣະເຈົ້ານັ້ນ ໃຫ້ຫລີກໜີຈາກແນວບໍ່ແມ່ນຈັ່ງຊີ້
ເດີ້ ແລ້ວມຸ້ງໜ້າໄປຕາມທາງຊອບທຳອັນຖືກຕ້ອງ ທາງທີ່ຖວາຍກຽດພຣະເຈົ້າ
ພ້ອມທັງຄວາມເຊື່ອ ຄວາມຮັກ ຄວາມອົດທົນພາກພຽນ ກັບຄວາມສຸພາບອ່ອນ-
ນ້ອມ
6:12 ໃຫ້ພະຍາຍາມສູ້ຢ່າງມຸ້ງໝັ້ນເພື່ອຄວາມເປັນເລີດໃນສະໜາມແຫ່ງຄວາມ
ເຊື່ອເດີ້ ຍຶດໝັ້ນໃນຊີວິດອັນຕະຫລອດໄປເປັນນິດເປັນຫລັກ ທີ່ພຣະເຈົ້າໄດ້ເອີ້ນ
ໄດ້ເຊີນເຈົ້າມາແລ້ວນັ້ນ ຊຶ່ງເຈົ້າໄດ້ຮັບປາກໄວ້ຕໍ່ພະຍານຫລາຍຄົນແລ້ວ
6:13 ຂ້ອຍຈັ່ງຂໍສັ່ງເຈົ້າຕໍ່ໜ້າພຣະເຈົ້າ ຜູ້ເພິ່ນໄດ້ໂຜດປະທານຊີວິດໃຫ້ໝົດຄູ່ແນວ
ກັບຕໍ່ໜ້າ ພຣະເຢຊູຄຣິດ ຜູ້ເພິ່ນເຄີຍໃຫ້ຖ້ອຍຄຳທີ່ດີຕໍ່ໜ້າຜູ້ກຳກັບ ປົນໂຕ ປີ-
ລາດ
6:14 ວ່າໃຫ້ເຈົ້າຮັກສາຂໍ້ຄຳສັ່ງນີ້ໄວ້ໃຫ້ດີເດີ້ ຈັ່ງບໍ່ມີທີ່ຕິວ່າກ່າວໄດ້ ຈົນຮອດຍາມທີ່
ພຣະເຢຊູຄຣິດເຈົ້າ ຜູ້ເປັນນາຍຊີວິດຂອງຄົນເຮົາ ໄດ້ສະເດັດລົງມາປາກົດພຣະ-
ອົງ
6:15 ຊຶ່ງບັດຮອດເລີກງານຍາມດີຂອງເພິ່ນນັ້ນ ເພິ່ນຊິສະເດັດກັບມາປາກົດພຣະ-
ອົງວ່າ ເປັນປະລະບຽງຜູ້ມີພຣະກຽດແຕ່ຜູ້ດຽວ ເປັນ ພຣະມະຫາກະສັດ ເໜືອ
ກະສັດທັງຫລາຍ ກັບເປັນພຣະເຈົ້າທ່ຽງແທ້ເໜືອເຈົ້າທັງຫລາຍ
6:16 ຜູ້ເພິ່ນເປັນອຳມະຕະດຳລົງຢູ່ຕະຫລອດການແຕ່ຜູ້ດຽວ ຊຶ່ງປະທັບຢູ່ໃນສະ-
ພາບຄວາມສະຫງ່າອັນສະຫວ່າງຈ້າທີ່ບໍ່ມີຄົນໃດສາມາດເຂົ້າໄປໄດ້ ກັບບໍ່ເຄີຍມີ
ໃຜເຫັນ ແລ້ວບໍ່ສາມາດເບິ່ງເຫັນໜ້າເພິ່ນໄດ້ ຂໍໃຫ້ພຣະກຽດກັບລິດທານຸພາບມີ
ແດ່ພຣະອົງຕະຫລອດເປັນນິດ ອາເມນ
6:17 ຈັ່ງຊັ້ນ ໃຫ້ສັ່ງຜູ້ຮັ່ງມີທາງໂລກນີ້ວ່າ ບໍ່ໃຫ້ຖືໂຕມັກໃຫຍ່ໃຝ່ສູງ ຫລືຫາກໍ່ຫວັງ
ຢູ່ໃນຊັບສົມບັດອະນິຈັງ ແຕ່ໃຫ້ຫາກໍ່ຫວັງຢູ່ໃນພຣະເຈົ້າຜູ້ເພິ່ນຢູ່ຢ່າງອຳມະຕະ

ແມ່ນຜູ້ຊຶ່ງໂຜດປະທານໝົດຄູ່ແນວໃຫ້ກັບຄົນເຮົາຢ່າງເຫລືອລົ້ນ ເພື່ອຊິໄດ້ຢູ່
ຢ່າງສຸກສຸກສະບາຍ
6:18 ຈັ່ງໃຫ້ເຂົາປະກອບການດີ ຮັ່ງມີໂດຍຄຸນງາມຄວາມດີຢ່າງເຫລືອລົ້ນ ມີນໍ້າໃຈ
ພ້ອມທີ່ຊິບໍລິຈາກຊ່ອຍ ແບ່ງປັນກັບຜູ້ອື່ນໆ
6:19 ເລີຍສະສົມຮາກຖານອັນດີງາມຂຶ້ນໄວ້ ສໍາລັບມື້ທາງໜ້າທີ່ຊິມາເຖິງນັ້ນ ກໍ
ເພື່ອພວກເຂົາຊິໄດ້ຖືເອົາຖືໃນຊີວິດອັນຕະຫລອດໄປເປັນນິດໄວ້ເປັນປີກແຜ່ນ
ໃຫ້ໝັ້ນຄົງ
6:20 ໂອ້ ຕີໂມທຽວ ເອີຍ ໃຫ້ເຝົ້າຮັກສາຫລັກຄວາມຈິງອັນທີ່ຂ້ອຍໄດ້ມອບໝາຍ
ໄວ້ກັບເຈົ້າເດີ້ ແລ້ວໃຫ້ຫລີກລ້ຽງການໂຕ້ຖຽງຂັດແຍ້ງກັນຕ່າງໆ ແນວບ້າໆບໍ໋ໆ ທີ່
ນອກຮີດ ຊຶ່ງເປັນແຕ່ເລື່ອງຕໍ່າຊ້າທີ່ຜູ້ລາງຄົນຖືກັນວ່າເປັນວິຊາຄວາມຮູ້
6:21 ຊຶ່ງຜູ້ລາງຄົນໄດ້ຮັບເອົາໄວ້ແລ້ວ ເລີຍຫລົງຜິດພາດໄປຈາກຫລັກຄວາມເຊື່ອ
ສຸດທ້າຍນີ້ ຂໍໃຫ້ພຣະກະລຸນາທິຄຸນຂອງພຣະເຈົ້າມີຢູ່ນໍາເຈົ້າເດີ້ ອາເມນ

# 2 ຕີໂມທຽວ

## 2 ຕີໂມທຽວ ບົດທີ 1

1:1 ຈາກ ໂປໂລ ທູດພິເສດຂອງ ພຣະເຢຊູຄຣິດ ດ້ວຍພຣະປະສົງຂອງພຣະເຈົ້າ
ຕາມ ພຣະຄໍາ ສັນຍາທີ່ເພິ່ນວ່າ ຊິໂຜດໃຫ້ຊີວິດອັນຕະຫລອດໄປເປັນນິດໂດຍ
ໃນ ພຣະເຢຊູຄຣິດ
1:2 ເຖິງ ຕີໂມທຽວ ລູກທີ່ຮັກແພງຂອງຂ້ອຍທາງຄວາມເຊື່ອ ຂໍພຣະກະລຸນາທິ-
ຄຸນ ຄວາມເມດຕາ ກັບຄວາມສະຫງົບສຸກ ຈາກພຣະເຈົ້າຜູ້ເປັນພໍ່ ກັບຈາກພຣະ-
ເຢຊູຄຣິດເຈົ້າ ນາຍຊີວິດຂອງພວກເຮົາ ດໍາລົງຢູ່ກັບເຈົ້າເຖີດ
1:3 ຂ້ອຍຂອບໃຈພຣະເຈົ້າ ຜູ້ທີ່ຂ້ອຍໄດ້ຮັບໃຊ້ໂດຍຈິດສໍານຶກຜິດຊອບຜ່ອງແຜ້ວ
ດີ ຄືກັນກັບປູ່ຍ່າຕາຍາຍພູ່ນ ວ່າຂ້ອຍອະທິຖານຕໍ່ພຣະເຈົ້າເພື່ອເຈົ້າບໍ່ໄດ້ຂາດໄດ້
ລືມ ທັງກາງເວັນກາງຄືນ
1:4 ຂ້ອຍຈັ່ງຄຶດຮອດຢາກເຫັນເຈົ້າແຮງ ເພື່ອຂ້ອຍຊິໄດ້ດີອົກດີໃຈນໍາ ຊຶ່ງຂ້ອຍຈື່
ໄດ້ວ່າເຈົ້າເຄີຍເປັນທຸກຈົນນໍ້າຕາໄຫລມາກ່ອນ

1:5 ບັດຍາມຂ້ອຍຄຶດພໍ້ຄວາມເຊື່ອອັນທີ່ແທ້ຈິງຂອງເຈົ້າ ຊຶ່ງ ແມ່ເຖົ້າ ໂລອີ ກັບ
ແມ່ ຢູນີເກ ຂອງເຈົ້ານັ້ນມີມາກ່ອນ ຂ້ອຍກໍຍັງແນ່ໃຈວ່າເຈົ້າມີຄວາມເຊື່ອອັນດຽວ
ກັນກັບເຂົາ
1:6 ຈັ່ງຊັ້ນ ຂ້ອຍຢາກເຕືອນໃຫ້ເຈົ້າເອົາໃຈໃສ່ຕໍ່ພົນສະຫວັນພິເສດນັ້ນ ທີ່ພຣະ-
ເຈົ້າໄດ້ໂຜດປະທານໃຫ້ເຈົ້າ ໃນຕອນທີ່ຂ້ອຍວາງມືເທິງເຈົ້າ
1:7 ຄືພຣະເຈົ້າບໍ່ໄດ້ປະທານໃຫ້ພວກເຮົາມີຈິດໃຈຂີ້ຢ້ານ ແຕ່ໄດ້ປະທານໃຫ້ມີໃຈ
ກ້າ ມີອຳນາດ ມີຄວາມຮັກ ກັບມີຈິດໃຈອັນໝັ້ນຄົງ
1:8 ຈັ່ງຊັ້ນ ເຈົ້າບໍ່ຄວນຊິອັບອາຍຕໍ່ຄຳພະຍານຂອງອົງພຣະຜູ້ເປັນເຈົ້າຂອງພວກ
ເຮົາ ຫລືຕໍ່ໂຕຂ້ອຍນຳ ຜູ້ຖືກຈອງຈຳຂັງໄວ້ຍ້ອນ ພຣະເຢຊູ ແຕ່ໃຫ້ຮ່ວມທຸກຮ່ວມ
ສຸກກັບຂ້ອຍໃນເລື່ອງຂ່າວປະເສີດໂດຍອາໄສກຳລັງອຳນາດຂອງພຣະເຈົ້າ
1:9 ຜູ້ເພິ່ນໄດ້ໂຜດໃຫ້ພວກເຮົາລອດພົ້ນ ແລ້ວໄດ້ເອີ້ນໄດ້ເຊີນໃຫ້ມາສູ່ຄວາມບໍລິ-
ສຸດ ບໍ່ແມ່ນຍ້ອນຕາມການປະຕິບັດຂອງຄົນເຮົາ ແຕ່ຕາມພຣະປະສົງທີ່ເພິ່ນມີໄວ້
ກັບຕາມພຣະກະລຸນາທິຄຸນທີ່ເພິ່ນໄດ້ໂຜດໃຫ້ເຮົາໂດຍໃນອົງ ພຣະເຢຊູຄຣິດ
ກ່ອນຊິສ້າງໂລກ
1:10 ຊຶ່ງບັດນີ້ ເປີດເຜີຍຄວາມແລ້ວໂດຍການປາກົດໂຕຂອງອົງ ພຣະເຢຊູຄຣິດ
ພຣະຜູ້ໂຜດຂອງເຮົາ ຜູ້ເພິ່ນໄດ້ປາບຄວາມຕາຍໃຫ້ລົ້ມເລີກໄປ ແລ້ວໄດ້ເປີດ
ທາງຊີວິດອຳມະຕະ ຄືຊີວິດອັນຕະຫລອດໄປເປັນນິດ ໃຫ້ສະຫວ່າງສະໄຫວ
ໂດຍທາງຂ່າວປະເສີດ
1:11 ຊຶ່ງຂ້ອຍໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ປະກາດ *ຂ່າວປະເສີດ* ເປັນທູດພິເສດ
ຂອງເພິ່ນ ກັບເປັນຄູບອກສອນຄົນຕ່າງຊາດ
1:12 ຍ້ອນເຫດນີ້ເນາະ ຂ້ອຍຈັ່ງຖືກຄວາມທຸກຍາກລຳບາກແນວໝູ່ນີ້ ຈັ່ງໃດກໍ
ຕາມ ຂ້ອຍບໍ່ມີຄວາມລະອາຍເລີຍ ຍ້ອນວ່າຂ້ອຍຮູ້ຈັກເພິ່ນດີ ຜູ້ທີ່ຂ້ອຍໄດ້ເຊື່ອ
ຫາກໍ່ນັ້ນ ແລ້ວຂ້ອຍໝັ້ນໃຈແນ້ວແນ່ວ່າ ເພິ່ນສາມາດເບິ່ງແຍງຮັກສາຄູ່ແນວທີ່
ຂ້ອຍໄດ້ມອບໄວ້ໃຫ້ກັບເພິ່ນ ຈົນຮອດມື້ນັ້ນຂອງເພິ່ນ *(ໃຫ້ເບິ່ງ 1 ໂກຣິນໂທ
3:9-15, 4:1-5)*

1:13 ສຳລັບເຈົ້ານັ້ນ ໃຫ້ຍຶດໝັ້ນໃນແບບຢ່າງຂອງຖ້ອຍຄຳອັນໝັ້ນຄົງແນ້ວແນ່ນັ້ນ
ຊຶ່ງເຈົ້າໄດ້ຍິນຈາກຂ້ອຍ ດ້ວຍຄວາມເຊື່ອຫາກໍ່ ກັບຄວາມຮັກຊຶ່ງຢູ່ໃນ ພຣະເຢຊູ-
ຄຣິດ
1:14 ສ່ວນຖ້ອຍຄຳອັນດີງາມນັ້ນທີ່ເຈົ້າໄດ້ຮັບມອບໄວ້ແລ້ວ ໃຫ້ຮັກສາໄວ້ໂດຍ
ອາໄສ ພຣະວິນຍານ ເປັນກຳລັງເດີ້ ຜູ້ເພິ່ນສະຖິດຢູ່ໃນພວກເຮົາທັງຫລາຍ
1:15 ເຈົ້າຄືຊິຮູ້ແລ້ວວ່າ ໝູ່ພວກທີ່ຢູ່ໃນເຂດ ອາເຊຍ ກໍໄດ້ຫັນໜີຈາກຂ້ອຍໝົດ
ແລ້ວ ຮ່ວມທັງ ຟູເຄໂລ ກັບ ເຮຣະໂມເກນ ນຳ
1:16 ຂໍພຣະຜູ້ເປັນເຈົ້າໂປດເມດຕາໄທເຮືອນ ໂອເນຊິໂຟໂຣ ນຳ ຍ້ອນວ່າຫລາຍ
ເທື່ອ ລາວ ເຄີຍປອບໃຈຂ້ອຍໃຫ້ຊື່ນບານ ກັບ ລາວ ບໍ່ເຄີຍລັງກຽດລະອາຍທີ່
ຂ້ອຍຖືກລ່າມໂສ້ໄວ້ນີ້
1:17 ແລ້ວຕອນ ລາວ ຢູ່ໃນ ໂຣມ ນັ້ນ ລາວ ກໍໄດ້ຕັ້ງໃຈຊອກຫາຂ້ອຍຈົນພົ້
1:18 ຂໍພຣະຜູ້ເປັນເຈົ້າໂຜດໃຫ້ ລາວ ພົ້ຄວາມເມດຕາໃນມື້ຂອງອົງພຣະຜູ້ເປັນເຈົ້າ
ນັ້ນ ຄືເຈົ້າຮູ້ຈັກວ່າ ລາວ ເຄີຍຮັບໃຊ້ຊ່ວຍຂ້ອຍຢູ່ເມືອງ ເອເຟໂຊ ນັ້ນຫລາຍຊຳ-
ໃດ

## 2 ຕີໂມທຽວ ບົດທີ 2

2:1 ຈັ່ງຊັ້ນ ຕີໂມທຽວ ລູກຝ່າຍວິນຍານຂອງຂ້ອຍເອີຍ ໃຫ້ເຈົ້າມີໃຈເຂັ້ມແຂງໃນ
ພຣະກະລຸນາທິຄຸນຊຶ່ງມີຢູ່ໃນ ພຣະເຢຊູຄຣິດ ເດີ້
2:2 ແລ້ວແນວທີ່ເຈົ້າໄດ້ຍິນຈາກຂ້ອຍຕໍ່ໜ້າພະຍານຫລາຍຄົນນັ້ນ ກໍໃຫ້ມອບໄວ້
ໃຫ້ກັບຜູ້ຊາຍຜູ້ສັດຊື່ພັກດີເດີ້ ຄືຜູ້ທີ່ສາມາດສອນຄົນອື່ນໆ ຖ່າຍທອດຕໍ່ໆ ກັນໄດ້
ນຳ
2:3 ຈັ່ງຊັ້ນ ໃຫ້ເຈົ້າອົດເອົາຕໍ່ຄວາມທຸກຍາກລຳບາກເພື່ອພຣະເຈົ້າ ຢ່າງເປັນທະ-
ຫານທີ່ດີຂອງ ພຣະເຢຊູຄຣິດ ເດີ້
2:4 ຄືບໍ່ມີທະຫານຄົນໃດທີ່ເຄີຍເຂົ້າປະຈຳການແລ້ວ ແລ້ວຍັງຮວມກັນຫຍຸ້ງກັບ
ການງານຊີວິດຝ່າຍໂລກນີ້ ເພື່ອຊິໄດ້ຖືກໃຈນາຍຜູ້ທີ່ຮັບສະໝັກເຂົາໃຫ້ເປັນທະ-
ຫານ

2:5 ແລ້ວຄັນຜູ້ໃດແຂ່ງຂັນເພື່ອຫວັງຄວ້າເອົາໄຊຊະນະ ຜູ້ນັ້ນຊິບໍ່ມີສິດຮັບພວງ-
ມາໄລນອກຈາກວ່າເຂົາສູ້ແຂ່ງຕາມກົດລະບຽບຂອງກິລານັ້ນ
2:6 ກັບວ່າ ຊາວນາຜູ້ໃດທີ່ລົງມືເຮັດໄຮ່ເຮັດນາຢ່າງໜັກ ກໍຕ້ອງເປັນຜູ້ແຮກທີ່ໄດ້-
ຮັບຜົນກ່ອນ
2:7 ໃຫ້ເຈົ້າພິຈາລະນາໃນແນວທີ່ຂ້ອຍເວົ້ານີ້ ແລ້ວຂໍພຣະເຈົ້າທີ່ຊິໂຜດໃຫ້ເຈົ້າມີ
ຄວາມເຂົ້າໃຈໃນໝົດຄູ່ແນວ
2:8 ຢ່າລືມເດີ້ ພຣະເຢຊູຄຣິດ ຊຶ່ງເປັນເຊື້ອສາຍກະສັດ ດາວິດ ໄດ້ຮັບການເປັນ
ຂຶ້ນມາຈາກຕາຍແລ້ວ ຕາມຂ່າວປະເສີດຂອງຂ້ອຍປະກາດນັ້ນ
2:9 ຍ້ອນເຫດເລື່ອງນີ້ເນາະ ຂ້ອຍຈັ່ງຖືກການທຸກຍາກລໍາບາກຄືໂຈນຜູ້ຮ້າຍ ຮອດ
ຖືກລ່າມໂສ້ໄວ້ນໍາ ແຕ່ວ່າ ພຣະຄໍາ ຂອງພຣະເຈົ້າບໍ່ມີການຜູກມັດຈໍາກັດໄວ້ໄດ້
ເລີຍ
2:10 ຈັ່ງຊັ້ນຂ້ອຍຈັ່ງຍິນດີທົນເອົາໝົດຄູ່ແນວ ເພື່ອຜູ້ຄົນທີ່ພຣະເຈົ້າໄດ້ເລືອກໄວ້
ນັ້ນ ຄືຜູ້ຄົນທີ່ຊິຮັບຄວາມລອດພົ້ນ ທີ່ປະກອບດ້ວຍຄວາມສະຫງ່າອັນອັນຕະ-
ຫລອດໄປເປັນນິດ ຊຶ່ງມີຢູ່ໃນ ພຣະເຢຊູຄຣິດ
2:11 ນີ້ກໍເປັນຄໍາສັດຈິງທີ່ວ່າ ຄັນພວກເຮົາຕາຍຮ່ວມກັບ ພຣະເຢຊູຄຣິດ ແລ້ວ
ພວກເຮົາກໍຊິໄດ້ຮັບຊີວິດໃໝ່ນໍາກັນກັບເພິ່ນ
2:12 ແລ້ວຄັນພວກເຮົາທົນເອົາ ເຮົາກໍຊິໄດ້ປົກຄອງຮ່ວມກັນກັບເພິ່ນ ແຕ່ວ່າຄັນ
ເຮົາປະຕິເສດເພິ່ນ ເພິ່ນກໍຊິປະຕິເສດເຮົາຄືກັນ
2:13 ຄັນພວກເຮົາຂາດຄວາມເຊື່ອ ເພິ່ນກໍຍັງສັດຊື່ພັກດີຢູ່ສະເໝີ ຍ້ອນວ່າເພິ່ນບໍ່
ສາມາດປະຕິເສດການເປັນພຣະເຈົ້າຂອງເພິ່ນເອງ
2:14 ຂໍ້ຄວາມແນວໝູ່ນີ້ ໃຫ້ເຈົ້າເຕືອນຄວາມຈໍາຂອງພວກເຂົາເດີ້ ບອກສອນເຂົາ
ຕໍ່ໜ້າພຣະຜູ້ເປັນເຈົ້າວ່າ ບໍ່ໃຫ້ຖຽງກັນໃນຂໍ້ໂຕ້ຖຽງຕ່າງໆ ແນວບໍ່ເປັນສາລະ ມັນ
ມີແຕ່ທໍາລາຍຄວາມເຊື່ອຂອງຜູ້ຮັບຟັງນັ້ນ
2:15 ໃຫ້ພະຍາຍາມຖວາຍໂຕເປັນທີ່ຄວນພໍໃຈຕໍ່ໜ້າພຣະເຈົ້າ ເປັນຄົນງານທີ່ບໍ່
ຕ້ອງອັບອາຍເລີຍ ໂດຍຮູ້ຈັກການແບ່ງແຍກຂໍ້ ພຣະຄໍາ ແຫ່ງຄວາມຈິງອອກໃຫ້
ຖືກຕ້ອງ

2:16 ແຕ່ວ່າໃຫ້ຫລີກລ້ຽງຈາກຄຳບ້າໆບໍໆ ອັນບໍ່ເປັນສາລະເດີ້ ຍ້ອນວ່າມັນເກີດ
ແນວທີ່ບໍ່ຖວາຍກຽດພຣະເຈົ້າແຮງຫລາຍຂຶ້ນ
2:17 ແລ້ວຖ້ອຍຄຳຂອງຄົນພວກນີ້ຊິລາມອອກໄປ ຄືພະຍາດຂີ້ມະເຮັງ ຊຶ່ງໃນຄົນ
ພວກນີ້ກໍມີ ຮີເມນາໂຍ ກັບ ຟີເລໂຕ
2:18 ຊຶ່ງສອງຄົນນີ້ໄດ້ພາດຫລົງຈາກຫລັກຄວາມຈິງໄປແລ້ວ ຄືເຂົາເວົ້າວ່າ ການ
ສະເດັດມາຂອງ ພຣະເຢຊູ ນັ້ນໄດ້ຜ່ານພົ້ນໄປແລ້ວ ຊຶ່ງຄວ່ຳຄວາມເຊື່ອຂອງຜູ້
ລາງຄົນລົງ
2:19 ຈັ່ງໃດກໍຕາມ ຫລັກຄວາມຈິງຂອງພຣະເຈົ້ານັ້ນໄດ້ຍັ່ງຍືນຢ່າງໝັ້ນຄົງຢູ່ຕະ-
ຫລອດ ຕາມທີ່ມີຄຳຈາລຶກໄວ້ວ່າ "ອົງພຣະຜູ້ເປັນເຈົ້າຮູ້ຈັກຄົນຂອງເພິ່ນ" ກັບວ່າ
"ໃຫ້ຄູ່ຄົນທີ່ອອກພຣະນາມຂອງ ພຣະຄຣິດ ຫັນອອກໄປຈາກຄວາມຊົ່ວ"
2:20 ຄືໃນວັງໃຫຍ່ມີເຄື່ອງໃຊ້ຫລາຍແນວ ບໍ່ວ່າແຕ່ເງິນແຕ່ທອງ ມີເຄື່ອງໃຊ້ແນວທີ່
ເປັນໄມ້ເປັນດິນໜຽວນຳ ຈັ່ງຊັ້ນລາງອັນມີໄວ້ເພື່ອມີກຽດ ແລ້ວລາງອັນກໍບໍ່ມີກຽດ
2:21 ຈັ່ງຊັ້ນ ຄັ່ນຜູ້ໃດຊຳລະໂຕເອງໃຫ້ອອກຈາກແນວບໍ່ມີກຽດນັ້ນ ຜູ້ນັ້ນກໍຊິເປັນ
ເຄື່ອງໃຊ້ອັນມີກຽດ ເໝາະດີສຳລັບການໃຊ້ງານຂອງນາຍ ພ້ອມສຳລັບງານອັນດີ
ໝົດຄູ່ຢ່າງ
2:22 ຈັ່ງຊັ້ນ ໃຫ້ຫລີກໜີຈາກກິເລດຂອງຄົນໜຸ່ມ ແລ້ວຕິດຕາມຄວາມຊອບທຳ
ຄວາມເຊື່ອ ຄວາມຮັກ ກັບສັນຕິພາບ ຮ່ວມກັນກັບຄົນທັງຫລາຍທີ່ຮ້ອງອອກ
ພຣະນາມຂອງອົງພຣະຜູ້ເປັນເຈົ້າດ້ວຍໃຈບໍລິສຸດ
2:23 ແຕ່ວ່າສ່ວນຂໍ້ຖຽງກັນໃນເລື່ອງບ້າໆບໍໆ ອັນໂງ່ ນັ້ນ ກໍໃຫ້ຫລີກລ້ຽງໂດຍຮູ້ວ່າ
ແນວໝູ່ນີ້ເກີດແຕ່ການໂຕ້ແຍ້ງກັນຊື່ໆ
2:24 ສ່ວນຜູ້ຮັບໃຊ້ຂອງພຣະເຈົ້ານັ້ນ ບໍ່ຄວນຊິໂຕ້ຖຽງກັນເລີຍ ແຕ່ຄວນມີໃຈອ່ອນ
ສຸພາບຕໍ່ຄູ່ຄົນ ສາມາດເປັນຄູສອນ ມີຄວາມພາກພຽນອົດທົນ
2:25 ກັບແນະນຳຝ່າຍພວກຕໍ່ຕ້ານດ້ວຍຄວາມສຸພາບເຍືອກໜາວ ຫວັງວ່າຫາ
ລາງເທື່ອພຣະເຈົ້າ ອາດ ຊິໂຜດໃຫ້ເຂົາກັບໃຈ ຈັ່ງຊິຮູ້ຈັກໃນເລື່ອງຄວາມຈິງ
2:26 ກັບເພື່ອເຂົາ ອາດ ຮູ້ເມື່ອໂຕ ຈັ່ງໄດ້ລອດພົ້ນຈາກກັບດັກຂອງພະຍາມານຊາ-
ຕານນັ້ນ ຄືຜູ້ທີ່ຖືກດັກຈັບໄວ້ໃຫ້ເຮັດຕາມຈຸດປະສົງຂອງມັນ

# 2 ຕີໂມທຽວ ບົດທີ 3

3:1 ແລ້ວໃຫ້ຮູ້ໄວ້ວ່າ ໃນຍາມທ້າຍຂອງຍຸກນີ້ ຊິມີຍາມໄພພິບັດອັນສາຫັດເກີດຂຶ້ນ
3:2 ຄື ຊິມີຄົນອັນທະພານ ຮັກແຕ່ເຈົ້າຂອງ ມັກເງິນທອງ ມັກອວດອ້າງ ເຫຍື້ອ-
ຫຍິ່ງຈອງຫອງ ໝິ່ນປະມາດ ບໍ່ເຊື່ອຟັງພໍ່ແມ່ ເນລະຄຸນບໍ່ຮູ້ບຸນຄຸນ ບໍ່ມີຄວາມບໍລິ-
ສຸດ
3:3 ບໍ່ຮູ້ຈັກຮັກແພງກັນ ຜິດຄຳສັນຍາ ບໍ່ໃຫ້ອະໄພກັນ ໃສ່ຮ້າຍທາສີກັນ ບໍ່ມີການ
ຄວບຄຸມໃຈໂຕເອງ ໂຫດຫ້ຽມ ກຽດຊັງຊັງແນວອັນດີງາມ
3:4 ເປັນຄົນທໍລະຍົດ ດື້ດ້ານ ຫົວສູງຖືດີ ຮັກຄວາມສະໜຸກສະໜານຫລາຍກວ່າ
ຮັກພຣະເຈົ້າ
3:5 ມີທ່າທີວ່າໃຫ້ກຽດພຣະເຈົ້າ ແຕ່ປະຕິເສດຜູ້ເພິ່ນມີລິດອຳນາດນັ້ນ ໃຫ້ຫັນ
ອອກຈາກຄົນຈັ່ງຊີ້ ບໍ່ໃຫ້ຄົບເດີ້
3:6 ແມ່ນຄົນຈັ່ງພວກນີ້ເນາະ ທີ່ແອບເຂົ້າໄປຕາມບ້ານຕາມເຮືອນ ທາຫລອກລໍ້
ເອົາແມ່ຍິງຜູ້ທີ່ບໍ່ຮູ້ຈັກທີບ ແບກບາບໜັກຫລາຍ ຖືກຈູງໄປຈູງມາຕາມກິເລດຕັນ-
ຫາຕ່າງໆ
3:7 ແມ່ນຄົນຈັ່ງຊີ້ ທີ່ສຶກສາຫາແຕ່ຄວາມຮູ້ຢູ່ຢ່າງຕໍ່ເນື່ອງ ແຕ່ບໍ່ເຂົ້າເຖິງຫລັກ
ຄວາມຈິງຈັກເທື່ອ
3:8 ຄືຕາມທີ່ ຢາເນ ກັບ ຢຳເບ ເຄີຍຕໍ່ຕ້ານ ທ່ານ ໂມເຊ ໃນສະໄໝກ່ອນແນວ
ໃດ ພວກນີ້ກໍຕໍ່ຕ້ານຫລັກຄວາມຈິງຄືກັນ ຄືຄົນຈຳພວກນີ້ມີຈິດໃຈເສື່ອມຊາມລົງ
ບໍ່ຍອມຮັບຄວາມຈິງເລື່ອງຄວາມເຊື່ອ
3:9 ຈັ່ງໃດກໍຕາມ ພວກນັ້ນກໍຊິຍຸດຕິຢູ່ແຄ່ນີ້ເອງ ຍ້ອນວ່າຄວາມໂງ່ຂອງເຂົາຊິໄດ້
ເຜີຍອອກໃຫ້ໝົດຄູ່ຄົນຮູ້ເຫັນ ຄືກັນກັບ ຢາເນ ກັບ ຢຳເບ ໃນສະໄໝກ່ອນນັ້ນ
3:10 ແຕ່ວ່າ ເຈົ້າໄດ້ຮູ້ດີ ຕິດຕາມໃນຫລັກຄຳສອນຂອງຂ້ອຍຢ່າງອ້ອມຄອບຢູ່
ແລ້ວ ໃນທາງການດຳເນີນຊີວິດ ກັບຈຸດມຸ້ງໝາຍ ຄວາມເຊື່ອ ຄວາມອົດທົນໄດ້
ນານ ຄວາມຮັກ ຄວາມຂະຫຍັນໝັ້ນພຽນ

3:11 ການຂົ່ມເຫງ ຄວາມທຸກຍາກລຳບາກ ຊຶ່ງໄດ້ເກີດກັບໂຕຂ້ອຍຢູ່ເມືອງ ອັນຕິ-
ໂອເຂຍ ເມືອງ ອີໂກນີອົນ ກັບ ເມືອງ ລີຊະທາ ວ່າມີການຂົ່ມເຫງຫລາຍອັນແທ້
ທີ່ຂ້ອຍຕ້ອງທົນເອົາ ແຕ່ວ່າພຣະເຈົ້າໄດ້ຊ່ອຍໃຫ້ຂ້ອຍລອດພົ້ນຈາກໝົດທູກແນວ
3:12 ເອີ້ ຄືຜູ້ໃດທີ່ຊິຢາກໃຊ້ຊີວິດໃນທາງຖວາຍກຽດພຣະເຈົ້າໂດຍໃນ ພຣະເຢຊູ-
ຄຣິດ ຜູ້ນັ້ນຊິຕ້ອງໂດນການຂົ່ມເຫງບຽດບຽນແນ່
3:13 ແຕ່ສ່ວນພວກຄົນຊົ່ວ ກັບພວກຄົນຈອມປອມ ກໍຊິຮ້າຍກວ່າເກົ່າຢູ່ເລື້ອຍ ໃນ
ການຫລອກຄົນ ກັບຖືກ ຄົນຫລອກນຳ
3:14 ແຕ່ສຳລັບເຈົ້ານັ້ນ ກໍໃຫ້ດຳເນີນຕໍ່ໄປໃນແນວທີ່ເຈົ້າໄດ້ຮຽນຮູ້ ກັບມີຄວາມ-
ໝັ້ນຄົງຢູ່ແລ້ວ ຊຶ່ງເຈົ້າຮູ້ດີວ່າເຈົ້າໄດ້ຮຽນຮູ້ມາກັບໃຜ
3:15 ວ່າ ຕັ້ງແຕ່ເປັນເດັກໜຸ່ມມາ ເຈົ້າໄດ້ຮູ້ຈັກ ພຣະຄຳ ອັນສັກສິດບໍລິສຸດ ທີ່ສາ-
ມາດໃຫ້ເຈົ້າມີສະຕິປັນຍາ ເຂົ້າໃຈເຖິງທາງລອດພົ້ນໂດຍທາງຄວາມເຊື່ອໃນ
ພຣະເຢຊູຄຣິດ
3:16 ຄື ພຣະຄຳ ທູກຂໍ້ ໄດ້ຮັບການດົນບັນດານຈາກພຣະເຈົ້າ ໃຊ້ເປັນປະໂຫຍດໃນ
ການສັ່ງສອນຮຽນຮູ້ ການຕັກເຕືອນວ່າກ່າວ ການປັບປຸງແກ້ໄຂ ການຝຶກຝົນອົບ-
ຮົມໃນທາງດີທາງຊອບ
3:17 ເພື່ອຄົນຂອງພຣະເຈົ້ານັ້ນ ຊິໄດ້ເປັນຜູ້ດີພ້ອມ ຮັບການກຽມໄວ້ຢ່າງອ້ອມ
ຄອບສຳລັບການດີທູກຢ່າງ

# 2 ຕີໂມທຽວ ບົດທີ 4

4:1 ຂ້ອຍຈັ່ງສັ່ງເຈົ້າໄວ້ຕໍ່ໜ້າພຣະເຈົ້າ ກັບຕໍ່ອົງພຣະເຢຊູຄຣິດເຈົ້າ ຜູ້ເພິ່ນຊິພິ-
ພາກສາທັງຄົນເປັນກັບຄົນຕາຍ ບັດຍາມເພິ່ນສະເດັດກັບມາປາກົດພຣະອົງ ຈັ່ງ
ຕັ້ງລາຊະອານາຈັກຂອງເພິ່ນ
4:2 ໃຫ້ປະກາດບອກສອນເດີ້ ມີໃຈພ້ອມພຽງໃນທູກຍາມ ທັງໃນໂອກາດສະດວກ
ກັບບໍ່ສະດວກ ຈັ່ງໃຫ້ເກືອບຈູງໃຈ ຕັກເຕືອນວ່າກ່າວ ຫ້າມ ສົ່ງເສີມໃຫ້ມີກຳລັງ
ໃຈ ແນະນຳໜຸນໃຈ ດ້ວຍກາລອດທົນພາກພຽນ ກັບການສອນເດີ້

4:3 ຍ້ອນວ່າໃນອະນາຄົດທີ່ຊິມາເຖິງ ຊິມີຄົນບໍ່ຍອມທົນເອົາຕໍ່ຫລັກຄຳສອນອັນ
ຖືກຕ້ອງ ແຕ່ເຂົາຊິຫາເອົາຫລາຍອາຈານ ຜູ້ທີ່ຊິສອນຕາມໃຈມັກທີ່ເຂົາປາດຖະ-
ໜາ ຫູຄັນຢາກຟັງ
4:4 ແລ້ວເຂົາຊິຫັນອອກໄປປິດຫູໄວ້ ບໍ່ຍອມຟັງຫລັກຄວາມຈິງອັນຖືກຕ້ອງ ແຕ່ຊິ
ຫັນໄປຮັບຟັງນິຍາຍຕ່າງໆ ແນວບໍ່ເປັນສາລະ
4:5 ແຕ່ສຳລັບເຈົ້ານັ້ນ ກໍໃຫ້ລະມັດລະວັງໄວ້ໃນຄູ່ແນວເດີ້ ອົດທົນຕໍ່ຄວາມທຸກ-
ຍາກລຳບາກ ເຮັດໜ້າທີ່ຢ່າງເປັນຜູ້ປະກາດຂ່າວປະເສີດ ຮັບໃຊ້ໜ້າທີ່ໃຫ້ບັນລຸ
ຜົນເດີ້
4:6 ສ່ວນຂ້ອຍພ້ອມຖວາຍຊີວິດ ຖືກເທອອກໃຫ້ເປັນເຄື່ອງບູຊາຢູ່ແລ້ວ ຄືຍາມເວ-
ລາທີ່ຂ້ອຍຊິລາຈາກໂລກນີ້ໄປໃກ້ຊິມາຮອດແລ້ວ
4:7 ຂ້ອຍໄດ້ສູ້ຄວ້າເອົາຄວາມເປັນເລີດໃນສະໜາມແຫ່ງຄວາມເຊື່ອແລ້ວ ຂ້ອຍ
ໄດ້ແຂ່ງຂັນເຂົ້າສູ່ເສັ້ນໄຊແລ້ວ ແລ້ວຂ້ອຍໄດ້ເຝົ້າຮັກສາຄວາມເຊື່ອໃຫ້ຄົງໄວ້
4:8 ຕໍ່ໄປນີ້ໄດ້ມີມົງກຸດອັນຊອບທຳ ໄວ້ເປັນລາງວັນໃຫ້ຂ້ອຍ ທີ່ອົງພຣະຜູ້ເປັນເຈົ້າ
ຜູ້ພິພາກສາຍຸດຕິທຳນັ້ນ ຊິມອບໃຫ້ໂຕຂ້ອຍໃນມື້ທີ່ຊິມາເຖິງນັ້ນ ແລ້ວບໍ່ແມ່ນວ່າ
ຊິມອບລາງວັນໃຫ້ແຕ່ຂ້ອຍຜູ້ດຽວ ແຕ່ຊິມອບໃຫ້ໝົດຄູ່ຄົນທີ່ມີໃຈຮັກ ຖ້າຮັບການ
ສະເດັດມາຂອງເພິ່ນ
4:9 ຈັ່ງຊັ້ນ ໃຫ້ເຈົ້າພະຍາຍາມມາຫາຂ້ອຍໃນໄວໆ ນີ້ເດີ້
4:10 ຄືວ່າ ນາຍ ເດມາ ໄດ້ປະຖິ້ມຂ້ອຍແລ້ວ ຍ້ອນວ່າເຂົາຮັກແພງສັງຄົມປະຈຸບັນ
ທາງໂລກນີ້ຫລາຍ ຈັ່ງໜີໄປຢູ່ເມືອງ ເທຊະໂລນິກ ແລ້ວສ່ວນນາຍ ເກເຊັນ
ລາວ ເດີນທາງໄປເຂດ ຄາລາເຕຍ ແລ້ວນາຍ ຕີໂຕ ໄດ້ໄປເມືອງ ດັນມາເຕຍ
4:11 ມີແຕ່ ລູກາ ຜູ້ດຽວທີ່ຍັງຢູ່ນຳຂ້ອຍນີ້ ຈັ່ງຊັ້ນ ໃຫ້ເຈົ້າພານາຍ ມາຣະໂກ ມານຳ
ເດີ້ ຍ້ອນວ່າເຂົາເປັນປະໂຫຍດສຳລັບຂ້ອຍໃນການຮັບໃຊ້ພຣະເຈົ້າ
4:12 ສ່ວນ ນາຍ ຕີຂີໂກ ຂ້ອຍໄດ້ສົ່ງ ລາວ ໄປຮັບໃຊ້ພຣະເຈົ້າຢູ່ເມືອງ ເອເຟໂຊ
ແລ້ວ

4:13 ບັດເຈົ້າມາ ກໍໃຫ້ເອົາເສື້ອຄຸມຂອງຂ້ອຍມານຳເດີ້ ອັນທີ່ຂ້ອຍຝາກໄວ້ກັບນາຍ
ກາລະໂປ ຢູ່ເມືອງ ໂທອາດ ກັບເອົາໜັງສືມາພ້ອມ ໂດຍສະເພາະໜັງສືໜັງມ້ວນ
ເດີ້
4:14 ສ່ວນນາຍ ອາເລັກຊັນໂດ ຊ່າງທອງແດງນັ້ນ ເຂົາໄດ້ໃສ່ຮ້າຍຂ້ອຍຢ່າງຮ້າຍ
ແຮງ ແລ້ວອົງພຣະຜູ້ເປັນເຈົ້າກໍຊິຕອບແທນເຂົາຕາມທີ່ເຂົາໄດ້ເຮັດມານັ້ນ
4:15 ໃຫ້ເຈົ້າຄອຍຖ້າລະວັງຜູ້ນີ້ໄວ້ໃຫ້ດີເດີ້ ຍ້ອນວ່າເຂົາຕັ້ງໂຕຕໍ່ຕ້ານຄວາມເວົ້າ
ຂອງພວກເຮົາຢ່າງຮ້າຍແຮງ ໃນເລື່ອງຂ່າວປະເສີດນັ້ນ
4:16 ຕອນຂ້ອຍໄດ້ຂຶ້ນສານສູ້ຄະດີເທື່ອແຮກນັ້ນ ບໍ່ມີໃຜຢືນຢັນຢູ່ຝ່າຍຂ້ອຍຈັກຄົນ
ແຕ່ເຂົາໜີປະຖິ້ມຂ້ອຍໝົດ ຂໍຢ່າໃຫ້ເຂົາເປັນໂທດຍ້ອນຄວາມຜິດນີ້ເລີຍ
4:17 ຈັ່ງໃດກໍຕາມ ອົງພຣະຜູ້ເປັນເຈົ້າເອງໄດ້ເຂົ້າຂ້າງຢືນຢູ່ຝ່າຍຂ້ອຍ ແລ້ວໄດ້ຊູ-
ກຳລັງໃຫ້ ເພື່ອເລື່ອງຂ່າວປະເສີດຊິໄດ້ຮັບການປະກາດຢ່າງເຕັມທີ່ຜ່ານທາງ
ຂ້ອຍນີ້ ເພື່ອຄົນຕ່າງຊາດທັງຫລາຍຊິໄດ້ຍິນໄດ້ຟັງກັນໝົດ ຍ້ອນເຫດນີ້ເນາະ
ຂ້ອຍຈັ່ງໄດ້ຮັບການກອບກູ້ອອກຈາກປາກສິງໂຕ
4:18 ແລ້ວນອກຈາກນັ້ນ ອົງພຣະຜູ້ເປັນເຈົ້າກໍຊິຊ່ອຍປ້ອງກັນຂ້ອຍໃຫ້ລອດພົ້ນ
ຈາກການຊົ່ວຮ້າຍໝົດຄູ່ຢ່າງ ແລ້ວຊິຮັກສາຂ້ອຍໄວ້ໃຫ້ປອດໄພດີຈົນກວ່າຊິໄດ້
ໄປຢູ່ເມືອງສະຫວັນຂອງເພິ່ນ ຂໍໃຫ້ສະຫງ່າລາສີຂອງເພິ່ນດຳລົງຢູ່ຕະຫລອດໄປ
ອາເມນ
4:19 ສຸດທ້າຍນີ້ ຂໍຝາກຄວາມຄິດຮອດໄປຍັງ ນາງ ປີຊະກີລາ ກັບ ນາຍ ອາກີລາ
ພ້ອມທັງຜູ້ຄົນໃນເຮືອນຂອງນາຍ ໂອເນຊີໂຟໂຣ ນຳເດີ້
4:20 ສ່ວນ ນາຍ ເອຣະຊະໂຕ ລາວ ພັກຢູ່ທີ່ເມືອງ ໂກຣິນໂທ ແລ້ວຝ່າຍ ນາຍ
ໂທຟີໂມ ນັ້ນ ຂ້ອຍໄດ້ປະ ລາວ ໄວ້ຢູ່ເມືອງ ມີເລໂຕ ຍ້ອນວ່າ ລາວ ຍັງປ່ວຍຢູ່
4:21 ແລ້ວໃຫ້ເຈົ້າພະຍາຍາມມາຫາຂ້ອຍໃຫ້ໄດ້ກ່ອນເຖິງລະດູໜາວເດີ້ ສ່ວນ ຢູ-
ບູໂລ ເຂົາກໍຝາກຄວາມ ຄິດຮອດມາຍັງເຈົ້ານຳ ພ້ອມທັງ ນາງ ປູເດັນ ນາຍ ລີ-
ໂນ ນາງ ກະໂລເດຍ ກັບພວກພີ່ນ້ອງຢູ່ທາງນີ້ນຳໝົດຄູ່ຄົນ
4:22 ຂໍອົງພຣະເຢຊູຄຣິດເຈົ້າ ຜູ້ເປັນນາຍຊີວິດ ສະຖິດຢູ່ນຳດວງຈິດວິນຍານຂອງ
ເຈົ້າເດີ້ ແລ້ວຂໍພຣະກະລຸນາທິຄຸນຂອງພຣະເຈົ້າ ດຳລົງຢູ່ນຳເຈົ້າເຖີ້ນ ອາເມນ

# ຕີໂຕ

## ຕີໂຕ ບົດທີ 1

1:1 ຈາກ ໂປໂລ ຜູ້ເປັນຂ້າທາດຮັບໃຊ້ຂອງພຣະເຈົ້າ ກັບເປັນທູດພິເສດຂອງ
ພຣະເຢຊູຄຣິດ ຊຶ່ງເປັນໄປຕາມທາງຄວາມເຊື່ອຂອງຜູ້ທີ່ພຣະເຈົ້າໄດ້ເລືອກໄວ້
ໃຫ້ເປັນຂອງເພິ່ນ ກັບເພື່ອການຮັບຮູ້ເຂົ້າໃຈດີໃນຫລັກຄວາມຈິງຊຶ່ງເປັນທີ່ຖວາຍ
ກຽດພຣະເຈົ້າ
1:2 ຈັ່ງມີຄວາມຫວັງອັນໝັ້ນຄົງເຖິງຊີວິດອັນຕະຫລອດໄປເປັນນິດ ຕາມທີ່ພຣະ-
ເຈົ້າຜູ້ເພິ່ນສັດຊື່ຕົວະບໍ່ເປັນ ໄດ້ສັນຍາໄວ້ວ່າຊິໂຜດໃຫ້ໃນດຶກດຳບັນກ່ອນມີກັບ-
ມີການ
1:3 ແຕ່ບັດນີ້ ໃນຍາມເວລາອັນເໝາະສົມ ພຣະເຈົ້າໄດ້ເປີດເຜີຍ ພຣະຄຳ ຂອງ
ເພິ່ນໃຫ້ຮູ້ເຖິງ ໂດຍທາງການປະກາດ *ເລື່ອງຂ່າວປະເສີດ* ຊຶ່ງຂ້ອຍເອງໄດ້ຮັບ
ການມອບໝາຍໄວ້ຕາມຄຳສັ່ງຂອງເພິ່ນ ຜູ້ເປັນພຣະຜູ້ໂຜດຂອງພວກເຮົາ
1:4 ຂ້ອຍຈັ່ງຂຽນເຖິງ ຕີໂຕ ລູກ ຂອງຂ້ອຍ ຊຶ່ງຢູ່ໃນຄວາມເຊື່ອອັນດຽວກັນຂອງ
ພວກເຮົາ ຂໍໃຫ້ພຣະກະລຸນາທິຄຸນ ຄວາມເມດຕາ ຄວາມສະຫງົບສຸກຈາກພຣະ-
ເຈົ້າຜູ້ເປັນພໍ່ ກັບຈາກພຣະເຢຊູຄຣິດເຈົ້າ ພຣະຜູ້ໂຜດຂອງຄົນເຮົາ ດຳລົງຢູ່ກັບ
ເຈົ້າເຖີດ
1:5 ຍ້ອນເຫດນີ້ເນາະ ຂ້ອຍຈັ່ງປະເຈົ້າໄວ້ຢູ່ ເກາະກະເຣເຕ ເພື່ອໃຫ້ແກ້ໄຂແນວ
ທີ່ຍັງບໍ່ທັນແລ້ວຢູ່ຫັ້ນ ໃຫ້ມັນຈົບເຈືອຮຽບຮ້ອຍ ກັບຕັ້ງຜູ້ຫລັກຜູ້ໃຫຍ່ໄວ້ໃນກຸ່ມຜູ້
ເຊື່ອຢູ່ຄູ່ເມືອງ ຕາມທີ່ຂ້ອຍໄດ້ສັ່ງເຈົ້າໄວ້ແລ້ວນັ້ນ
1:6 ຄືຄັ່ນຜູ້ຊາຍຜູ້ໃດໃຊ້ຊີວິດຢ່າງບໍ່ມີຂໍ້ຕິວ່າກ່າວໄດ້ ເປັນຜົວມີໃຈໃຫ້ເມຍຜູ້ດຽວ
ມີລູກມີເຕົ້າທີ່ສັດຊື່ພັກດີ ບໍ່ຖືກກ່າວຫາວ່າເປັນນັກເລງ ຫລືຫົວດື້ບໍ່ຍອມຟັງຄວາມ
1:7 ຄື ຜູ້ເບິ່ງແຍງນັ້ນ ໃນຖານະວ່າເປັນຜູ້ຮັບໃຊ້ຂອງພຣະເຈົ້າ ຕ້ອງເປັນຄົນທີ່ບໍ່ມີ
ຂໍ້ຕິວ່າກ່າວໄດ້ ບໍ່ເປັນຄົນຍິ່ງຜະຫຍອງທີ່ມັກເອົາໃຈໂຕເອງ ບໍ່ເປັນຄົນໃຈຮ້ອນ ບໍ່
ເປັນຄົນຕິດເຫລົ້າເມົາສຸລາ ບໍ່ເປັນຄົນໃຈນັກເລງຫົວໄມ້ ກັບບໍ່ເປັນຄົນມັກໂລບ
ເຫັນແກ່ໄດ້

1:8 ແຕ່ເປັນຄົນມີນິໄສມັກຕ້ອນຮັບແຂກ ເປັນຄົນມັກຄວາມດີ ເປັນຄົນມີສະຕິອ້ອມ
ຄອບດີ ເປັນຄົນມີໃຈຍຸດຕິທຳ ເປັນຄົນບໍລິສຸດບໍ່ມີມົນທິນ ເປັນຄົນຄວບຄຸມໃຈຮູ້-
ຈັກການຄວບຄຸມຕົວເອງ
1:9 ໂດຍການຖືເອົາຖືຢ່າງໝັ້ນໃນ ພຣະຄຳ ອັນສັດຈິງ ຕາມທີ່ໄດ້ຮັບການສອນມາ
ແລ້ວ ເພື່ອຊິສາມາດເຕືອນສະຕິ ກັບຊີ້ແຈງໃຫ້ຮູ້ເມື່ອໃນທາງຜິດ ຜູ້ທີ່ຄັດຄ້ານຕໍ່
ຫລັກຄວາມຈິງ ໂດຍອ້າງອີງຫລັກຄຳສອນອັນຖືກຕ້ອງ
1:10 ຄື ມີຫລາຍຄົນທີ່ຫົວດື້ດ້ານ ເວົ້າແຕ່ແນວບໍ່ເປັນສາລະ ກັບຫລອກລວງຜູ້ອື່ນ
ນັ້ນກໍແມ່ນຄົນ ຢິວ ໂດຍສະເພາະ ທີ່ຖືການເຂົ້າພິທີຕັດເປັນຫລັກ
1:11 ຈຳເປັນຕ້ອງປິດປາກພວກນີ້ໃຫ້ເຊົາເວົ້າເລີຍ ຍ້ອນວ່າເຂົາມັກທຳລາຍເຮືອນ
ໃຫ້ລົ້ມລົງ ສອນແນວບໍ່ແມ່ນທີ່ບໍ່ຄວນຊິສອນ ຍ້ອນເຫັນແກ່ໄດ້
1:12 ໃນພວກເຂົາກໍມີນັກປັດຊະຍາຄົນໜຶ່ງທີ່ເຄີຍເວົ້າວ່າ “ຄົນ *ເກາະກະເຣເຕ* ນັ້ນ
ມີແຕ່ເວົ້າຂີ້ຕົວະ ເປັນພວກປ່າເຖື່ອນ ເປັນຄົນຂີ້ຄ້ານນັ່ງກິນນອນກິນ”
1:13 ຄຳພະຍານທີ່ອ້າງອີງນີ້ເປັນຄວາມຈິງ ຈັ່ງຊັ້ນ ໃຫ້ເຈົ້າໄປຕໍ່ວ່າຄົນພວກນີ້ຢ່າງ
ແຮງເລີຍເດີ້ ເພື່ອເຂົາຊິໄດ້ກັບໃຈຕັ້ງໂຕໃຫ້ໝັ້ນຄົງໃນຫລັກຄວາມເຊື່ອຢ່າງຖືກ
ຕ້ອງ
1:14 ເພື່ອເຂົາຊິບໍ່ໄດ້ສົນໃຈໃນນິຍາຍນ້ຳເນົ່າອັນຂາດສາລະຂອງພວກຢິວອີກ ກັບ
ໃນບົດສອນຂອງຄົນທີ່ໄດ້ຫັນອອກຈາກຫລັກຄວາມຈິງໄປ
1:15 ຄືສຳລັບຄົນທີ່ມີໃຈບໍລິສຸດ ເຂົາມອງຄູ່ແນວໃນທາງບໍລິສຸດ ແຕ່ສຳລັບພວກ
ຄົນມີໃຈມົນທິນ ກັບພວກຄົນບໍ່ເຊື່ອ ກໍບໍ່ມີແນວໃດທີ່ບໍລິສຸດຈັກແນວເລີຍ ຍ້ອນ
ວ່າຄວາມນຶກຄິດກັບຈິດສຳນຶກຜິດຊອບຂອງພວກເຂົາເປັນມົນທິນໄປໝົດ
1:16 ພວກນີ້ຮັບປາກວ່າຮູ້ຈັກກັບພຣະເຈົ້າ ແຕ່ການກະທຳຂອງເຂົາປະຕິເສດເພິ່ນ
ຄົນຈັ່ງຊີ້ເປັນຕາໜ່າຍແທ້ ບໍ່ຍອມເຊື່ອຟັງຜູ້ໃດເລີຍ ເຂົາຈັ່ງຖືກຕັດສິດໄປແລ້ວ
ສຳລັບການດີຄູ່ຢ່າງ

## ຕິໂຕ ບົດທີ 2

2:1 ແຕ່ສຳລັບເຈົ້ານັ້ນ ໃຫ້ເວົ້າແຕ່ແນວທີ່ສອດຄ້ອງກັບຫລັກຄຳສອນອັນຖືກຕ້ອງ
ເດີ້

2:2 ເພື່ອພວກຜູ້ຊາຍອາວຸໂສຊິເປັນຄົນອ້ອມຄອບດີ ເປັນຄົນທີ່ຄວນເຄົາລົບນັບຖື
ມີສະຕິປັນຍາໃນການຄວບຄຸມຕົວເອງ ໝັ້ນຄົງໃນຫລັກຄວາມເຊື່ອ ໃນຄວາມຮັກ
ກັບໃນຄວາມອົດທົນພາກພຽນ
2:3 ແລ້ວພວກຍິງອາວຸໂສກໍຄືກັນ ເພື່ອເຂົາຊິເປັນຄົນທີ່ຄວນເຄົາລົບນັບຖືໃນການ
ປະພຶດ ບໍ່ເປັນຄົນໃສ່ຮ້າຍທາສີ ບໍ່ເປັນຄົນຕິດເຫລົ້າເມົາຢາ ແຕ່ສາມາດເປັນຜູ້
ສອນໃນທາງທີ່ດີງາມ
2:4 ເພື່ອເຂົາຊິຝຶກສອນພວກຍິງສາວໆ ໃຫ້ຮູ້ຈັກການຄວບຄຸມປະມານໂຕເອງໃຫ້
ອ້ອມຄອບດີ ໃຫ້ຮັກຜົວ ກັບຮັກລູກໆ ຂອງເຂົາ
2:5 ກັບເພື່ອໃຫ້ຍິງສາວນັ້ນມີສະຕິປັນຍາ ຮັກສາໂຕເອງໄວ້ໃຫ້ບໍລິສຸດ ເອົາໃຈໃສ່
ໃນງານເຮືອນ ເປັນຄົນດີງາມ ຮູ້ຈັກເຊື່ອຟັງຜົວຂອງໂຕເອງ ເພື່ອຄົນພາຍນອກຊິ
ບໍ່ໄດ້ຫລົບຫລູ່ດູໝິ່ນ ພຣະຄຳ ຂອງພຣະເຈົ້າເລີຍ
2:6 ສ່ວນຜູ້ຊາຍໜຸ່ມກໍຄືກັນ ໃຫ້ເຕືອນເຂົາໃຫ້ຮູ້ຈັກການຄວບຄຸມປະມານໂຕເອງ
ໃຫ້ອ້ອມຄອບດີເດີ້
2:7 ແລ້ວສຳລັບເຈົ້ານັ້ນ ໃຫ້ສະແດງໂຕເປັນແບບຢ່າງໃນການເຮັດດີທູ່ແນວ ໃນ
ດ້ານການສອນກໍໃຫ້ຊື່ກົງດີ ຢ່າງຄວນເຄົາລົບນັບຖື ດ້ວຍຄວາມບໍລິສຸດຈິງໃຈ
ລ້ວນໆ
2:8 ໃຫ້ມີຖ້ອຍຄຳອັນມີເຫດມີຜົນ ທີ່ບໍ່ມີຜູ້ໃດຊິຕິວ່າກ່າວໄດ້ ເພື່ອຝ່າຍຕໍ່ຕ້ານຊິ
ອັບອາຍ ບໍ່ມີຄວາມຊົ່ວແນວບໍ່ດີຊິເວົ້າໃຫ້ເຈົ້າໄດ້ເລີຍ
2:9 ສ່ວນຜູ້ເປັນຂ້າທາດນັ້ນ ກໍໃຫ້ບອກພວກເຂົາໃຫ້ຮັບໃຊ້ຟັງຄວາມນາຍເຈົ້າ
ຂອງ ເຮັດແຕ່ແນວທີ່ຊິຖືກໃຈນາຍໃນທູ່ຢ່າງ ບໍ່ໃຫ້ຕອບໂຕ້ຖຽງເພິ່ນເລີຍ
2:10 ກັບບໍ່ໃຫ້ຍັກຍອກລັກນ້ອຍຂະໂມຍນ້ອຍ ແຕ່ໃຫ້ສັດຊື່ພັກດີໃນໝົດທູ່ແນວ
ເພື່ອວ່າເຂົາຊິໄດ້ປະດັບ ພຣະຄຳ ຂອງພຣະເຈົ້າ ພຣະຜູ້ໂຜດຂອງຄົນເຮົາ ດ້ວຍ
ການຖວາຍກຽດໃນໝົດທູ່ຢ່າງ
2:11 ດ້ວຍວ່າ ພຣະກະລຸນາທິຄຸນຂອງພຣະເຈົ້າ ທີ່ນຳຄວາມລອດພົ້ນມາໃຫ້ ໄດ້
ປາກົດແກ່ຄົນທັງປວງແລ້ວ

2:12 ໄດ້ສອນຄົນເຮົາວ່າ ຄວນປະຕິເສດນິໄສແນວຕ່າງໆ ທີ່ບໍ່ຖວາຍກຽດພຣະເຈົ້າ
ກັບຄວນປະຕິເສດກິເລດຕັນຫາທາງໂລກນີ້ນຳ ແລ້ວຈັ່ງໃຊ້ຊີວິດຢ່າງມີສະຕິປັນ-
ຍາອ້ອມຄອບດີ ຕາມທາງຊອບທຳອັນ ຖືກຕ້ອງ ໃນທາງທີ່ຖວາຍກຽດພຣະເຈົ້າ
ໃນປະຈຸບັນນີ້
2:13 ແລ້ວຈັ່ງຄອຍຖ້າຮັບ ຄວາມຫວັງອັນປະເສີດທີ່ໝັ້ນຄົງ ຄືການສະເດັດມາອັນ
ປະກອບດ້ວຍສະຫງ່າລາສີຂອງພຣະເຈົ້າ ຊຶ່ງເປັນພຣະຜູ້ໂຜດອັນໃຫຍ່ຍິ່ງຂອງ
ຄົນເຮົານຳ ຄືພຣະເຢຊູຄຣິດເຈົ້າ
2:14 ຜູ້ເພິ່ນທີ່ໄດ້ອຸທິດຊີວິດຂອງເພິ່ນເອງເພື່ອຄົນເຮົາ ເພື່ອຊິໄດ້ໄຖ່ຄົນເຮົາອອກ-
ຈາກຄວາມຊົ່ວຊ້າເລວຊາມໝົດຄູ່ແນວ ແລ້ວຈັ່ງຊຳລະພວກເຮົາໃຫ້ເປັນຄົນພິ-
ເສດສະເພາະເພິ່ນ ມີຄວາມກະຕືລືລົ້ນໃນການດີ
2:15 ຂໍ້ຄວາມແນວໝູ່ນີ້ ກໍໃຫ້ແນະນຳບອກສອນ ຕັກເຕືອນວ່າກ່າວ ດ້ວຍສິດທິ-
ອຳນາດໃນຄູ່ຢ່າງເດີ້ ຢ່າໃຫ້ຜູ້ໃດດູໝິ່ນດູຖູກເຈົ້າໄດ້ເລີຍເດີ້

## ຕີໂຕ ບົດທີ 3

3:1 ໃຫ້ເຕືອນຄວາມຈຳພວກເຂົາເດີ້ ວ່າ ໃຫ້ຍອມຢູ່ໃຕ້ອຳນາດຂອງພວກຜູ້ປົກ-
ຄອງ ກັບຫົວໜ້າ ພ້ອມທີ່ຊິເຊື່ອຟັງເຂົາ ກັບເຮັດການດີຄູ່ແນວຢູ່ສະເໝີ
3:2 ກັບບໍ່ໃຫ້ເວົ້າໃສ່ຮ້າຍຜູ້ໃດເລີຍ ບໍ່ໃຫ້ເປັນຄົນມັກທະເລາະວິວາດກັນ ແຕ່ໃຫ້-
ເປັນຄົນອ່ອນສຸພາບ ສະແດງຄວາມນອບນ້ອມຖ່ອມໂຕຕໍ່ຄົນທັງປວງນຳ
3:3 ຄື ພວກເຮົາເອງກໍເຄີຍເປັນຄົນໂງ່ ບໍ່ຮູ້ຈັກທິບມາກ່ອນຄືກັນ ບໍ່ຮູ້ຈັກເຊື່ອຟັງ
ຄວາມ ເປັນຂີ້ຂ້າມ້າໃຊ້ຂອງກິເລດຕັນຫາຕ່າງໆ ໃຊ້ຊີວິດໃນທາງອິດສາປອງ-
ຮ້າຍ ກັດກັນກິນກັນ ກຽດຊັງຊັງຕໍ່ກັນແລະກັນ
3:4 ແຕ່ວ່າ ບັດຍາມຄວາມເມດຕາປານີ ກັບຄວາມຮັກແພງຂອງພຣະເຈົ້າ ຄືພຣະ-
ຜູ້ໂຜດຂອງຄົນເຮົາ ໄດ້ມາປາກົດຕໍ່ຄົນທັງຫລາຍ
3:5 ຊຶ່ງວ່າ ທີ່ພຣະເຈົ້າໂຜດໃຫ້ຄົນເຮົາລອດພົ້ນໄດ້ນັ້ນ ບໍ່ໄດ້ຂຶ້ນຢູ່ກັບຄຸນງາມ
ຄວາມດີທີ່ຄົນເຮົາໄດ້ເຮັດແຕ່ປະການໃດເລີຍ ແຕ່ຕາມພຣະກະລຸນາທິຄຸນຂອງ
ເພິ່ນ ໂດຍການຊຳລະໃຫ້ມີໃຈບັງເກີດໃໝ່ ສ້າງຂຶ້ນມາໃຫ້ເປັນຄົນໃໝ່ໂດຍ
ພຣະວິນຍານ

3:6 ທີ່ເພິ່ນໄດ້ໂປດຫຸ້ມເທໃຫ້ຢູ່ນຳພວກເຮົາຢ່າງລົ້ນເຫລືອ ໂດຍທາງ ພຣະເຢຊູ-
ຄຣິດ ພຣະຜູ້ໂຜດຂອງຄົນເຮົາ
3:7 ຊຶ່ງບັດນີ້ ພຣະເຈົ້າໄດ້ໂຜດໃຫ້ຄົນເຮົາເປັນຜູ້ຊອບທຳດີພ້ອມແລ້ວ ໂດຍພຣະ-
ກະລຸນາທິຄຸນຂອງເພິ່ນເອງ ຄົນເຮົາຈັ່ງເປັນທາຍາດໃນການຮັບມໍລະດົກ ຕາມທີ່
ມຸ້ງຫວັງນັ້ນ ຄືຊີວິດອັນຕະຫລອດໄປເປັນນິດ
3:8 ນີ້ກໍເປັນຖ້ອຍຄຳອັນສັດຈິງ ຊຶ່ງຂ້ອຍປາດຖະໜາຢາກໃຫ້ເຈົ້າເນັ້ນຢ່າງບໍ່ຢູ່ບໍ່
ເຊົາ ເພື່ອຄົນທັງຫລາຍທີ່ເຊື່ອໃນພຣະເຈົ້ານັ້ນ ຊິໄດ້ພະຍາຍາມເຮັດການດີຄືງໄວ້
ຢູ່ສະເໝີ ແນວໝູ່ນີ້ກໍເປັນການດີ ເປັນປະໂຫຍດໃຫ້ກັບຄົນທົ່ວໄປ
3:9 ແຕ່ວ່າໃຫ້ຫລີກລ້ຽງຄຳຖາມອັນບໍ່ເປັນສາລະ ແນວທີ່ເກີດການໂຕ້ຖຽງກັນ
ການລ່າຍໄປຕາມລຳດັບວົງຕະກູນຕ່າງໆ ການທະເລາະວິວາດກັນ ກັບການຕໍ່ສູ້
ແຂ່ງຂັນກັນໃນຂໍ້ກົດບັນຍັດຕ່າງໆ ຍ້ອນວ່າແນວໝູ່ນີ້ບໍ່ມີປະໂຫຍດໃຊ້ການບໍ່ໄດ້
ເລີຍ
3:10 ສ່ວນຄົນໃດໆ ທີ່ນອກຮອຍນອກທາງທີ່ເຮັດໃຫ້ແຕກແຍກກັນແນວນີ້ ກໍໃຫ້
ເຂົາອອກໄປເລີຍເດີ້ ຫລັງຈາກຕັກເຕືອນເຂົາເປັນເທື່ອແຮກກັບເທື່ອທີ່ສອງແລ້ວ
3:11 ໂດຍຮູ້ຢູ່ແລ້ວວ່າ ຄົນແນວນີ້ເປັນຄົນວິປະລິດທີ່ຜິດປົກກະຕິ ພວມເຮັດຢູ່ໃນ
ທາງບາບ ແລ້ວປະນາມໂຕເຂົາເອງນຳ
3:12 ບັດພໍຂ້ອຍໃຊ້ ນາຍ ອາເຕມາ ຫລື ນາຍ ຕີຂີໂກ ມາຫາເຈົ້າ ກໍໃຫ້ເຈົ້າຕັ້ງໃຈ
ໄປຫາຂ້ອຍຢູ່ເມືອງ ນີໂກໂປລີ ເດີ້ ຄືຂ້ອຍຕັດສິນວ່າຊິພັກຢູ່ນັ້ນຕອນລະດູໜາວ
3:13 ແລ້ວໃຫ້ເຈົ້າຊ່ອຍສົ່ງ ນາຍ ເຊນັດ ຜູ້ເປັນທະນາຍຄວາມ ກັບ ນາຍ ອາໂປໂລ
ໃນການເດີນທາງຂອງເຂົາຢ່າງໄວໆ ເດີ້ ຊ່ອຍເຂົາເພື່ອບໍ່ໃຫ້ຂາດອີຫຍັງເລີຍ
3:14 ຄື ພວກພີ່ນ້ອງຂອງເຮົາຄວນຊິຮຽນຮູ້ຝຶກກັນໃນການເຮັດດີຄືງໄວ້ຢູ່ສະເໝີ
ເພື່ອບັດຍາມເກີດມີການທຸກຍາກລຳບາກຕ່າງໆ ພວກເຂົາກໍຊິບໍ່ໄດ້ຂາດຜົນໃນ
ການເຮັດດີ
3:15 ສຸດທ້າຍນີ້ ຄູ່ຄົນທີ່ຢູ່ນຳຂ້ອຍຢູ່ທາງນີ້ ຝາກຄວາມຄຶດຮອດມາຍັງເຈົ້າ ຊ່ອຍ
ທັກທາຍພີ່ນ້ອງທີ່ເຊື່ອຊຶ່ງຮັກແພງພວກເຮົາຢູ່ທາງພູ້ນໃຫ້ຂ້ອຍນຳ ຂໍພຣະກະລຸ-
ນາທິຄຸນດຳລົງຢູ່ກັບພວກເຈົ້າໝົດຄູ່ຄົນເຖີ້ນ ອາເມນ

# ຟີເລໂມນ

1 ຈາກ ໂປໂລ ຜູ້ຖືກຈອງຈຳເພື່ອ ພຣະເຢຊູຄຣິດ ກັບຈາກ ຕີໂມທຽວ ນ້ອງຊາຍ
ຂອງເຮົາໃນພຣະເຈົ້າ ເຖິງ ນາຍ ຟີເລໂມນ ໝູ່ຮ່ວມງານທີ່ຮັກຂອງເຮົາ
2 ກັບເຖິງ ນາງ ອັບເຟຍ ຜູ້ເປັນທີ່ຮັກ ກັບ ອາຊີໂປ ຜູ້ເປັນໝູ່ທະຫານ *ເພື່ອ ພຣະ-
ຄຣິດ* ນຳກັນກັບເຮົາ ກັບເຖິງກຸ່ມຜູ້ເຊື່ອທີ່ຢູ່ໃນບ້ານຂອງເຈົ້າ
3 ຂໍໃຫ້ພຣະກະລຸນາທິຄຸນ ກັບສັນຕິພາບ ຊຶ່ງຈາກພຣະເຈົ້າຜູ້ເປັນພໍ່ຂອງເຮົາ ກັບ
ຈາກພຣະເຢຊູຄຣິດເຈົ້າ ດຳລົງຢູ່ກັບພວກເຈົ້າເຖີດ
4 ຂ້ອຍຂອບຄຸນພຣະເຈົ້າຂອງຂ້ອຍ ໂດຍໄດ້ເອີ່ຍຊື່ເຈົ້າຢູ່ສະເໝີບັດຂ້ອຍອະທິ-
ຖານເວົ້ານຳເພິ່ນ
5 ຍ້ອນວ່າ ຂ້ອຍໄດ້ຍິນຮອດຄວາມຮັກແພງກັບຄວາມເຊື່ອຂອງເຈົ້າທີ່ມີຕໍ່ ພຣະ-
ເຢຊູເຈົ້າ ກັບຕໍ່ຄົນຂອງພຣະເຈົ້າທັງຫລາຍນຳ
6 ກໍເພື່ອການສື່ສານຄວາມເຊື່ອຂອງເຈົ້າໃຫ້ຄົນຟັງຊິໄດ້ເກີດຜົນ ເນື່ອງດ້ວຍການ
ຍອມຮັບເຖິງແນວດີຄູ່ຢ່າງ ຊຶ່ງມີຢູ່ໃນເຈົ້າໂດຍທາງ ພຣະເຢຊູຄຣິດ
7 ນ້ອງຊາຍໃນພຣະເຈົ້າ ເອີຍ ພວກເຮົາມີຄວາມຍິນດີກັບຄວາມຊູໃຈຫລາຍ
ຍ້ອນຄວາມຮັກຂອງເຈົ້າຕໍ່ພີ່ນ້ອງ ເປັນເຫດໃຫ້ຈິດໃຈຂອງພວກຄົນຂອງພຣະ-
ເຈົ້າມີແຮງສົດຊື່ນຂຶ້ນ
8 ຈັ່ງຊັ້ນ ແມ່ນວ່າຂ້ອຍ ອາດ ມີໃຈກ້າໃນ ພຣະຄຣິດ ທີ່ຊິໃຊ້ສິດສັ່ງໃຫ້ເຈົ້າເຮັດ
ແນວທີ່ສົມຄວນ
9 ແຕ່ຍ້ອນເຫັນແກ່ຄວາມຮັກ ຂ້ອຍຂໍອ້ອນວອນເຈົ້າເປັນການດີກວ່າ ຄືອ້ອນວອນ
ຢ່າງຂ້ອຍ ໂປໂລ ນີ້ ແມ່ນຊະລາແລ້ວ ຊຶ່ງບັດນີ້ໄດ້ຖືກຈອງຈຳໄວ້ຍ້ອນເຫັນແກ່
ພຣະເຢຊູຄຣິດ
10 ຂ້ອຍຂໍອ້ອນວອນເຈົ້າຍ້ອນ ໂອເນສິໂມ ຜູ້ເປັນລູກໃນພຣະເຈົ້າຂອງຂ້ອຍ ຊຶ່ງ
ຂ້ອຍໄດ້ນຳມາເກີດໃໝ່ *ຝ່າຍວິນຍານ* ບັດຍາມຂ້ອຍຍັງຖືກຈອງຈຳໄວ້ຢູ່
11 ຊຶ່ງແຕ່ກ່ອນນັ້ນເຂົາບໍ່ຄ່ອຍເປັນປະໂຫຍດປານໃດເພື່ອເຈົ້າ ແຕ່ບັດນີ້ເຂົາເປັນ
ປະໂຫຍດທັງເພື່ອເຈົ້າກັບເພື່ອຂ້ອຍນຳ

12 ຂ້ອຍຈັ່ງສົ່ງເຂົາ ຜູ້ເປັນດວງຈິດຂອງຂ້ອຍ ກັບໄປຫາເຈົ້າອີກ ຈັ່ງຊັ້ນ ກະລຸນາ
ຕ້ອນຮັບເຂົາແໜ່
13 ຊຶ່ງຂ້ອຍຄຶດຢາກຊິໃຫ້ເຂົາຢູ່ກັບຂ້ອຍທາງນີ້ກ່ອນ ເພື່ອເຂົາຊິໄດ້ຄອຍຖ້າເບິ່ງ-
ແຍງຂ້ອຍ ໃນຍາມທີ່ຂ້ອຍພວມຖືກຈອງຈຳຍ້ອນຂ່າວປະເສີດນັ້ນ
14 ແຕ່ວ່າ ຂ້ອຍຊິບໍ່ໄດ້ເຮັດຫຍັງນອກຈາກເຈົ້າຊິອະນຸຍາດນຳ ເພື່ອວ່າການດີ
ຂອງເຈົ້າ ບໍ່ ອາດ ເປັນດ້ວຍການບັງຄັບເກງໃຈກັນ ແຕ່ດ້ວຍຄວາມຫວັງດີ
15 ຄື ຫາລາງເທື່ອ ການທີ່ເຂົາໜີອອກມາຊົ່ວລະຍະໜຶ່ງນັ້ນ ອາດ ເພື່ອວ່າເຈົ້າຊິ
ຕ້ອນຮັບເຂົາມາຢູ່ນຳຕະຫລອດໄປ
16 ບັດນີ້ ບໍ່ເປັນໃນຖານະວ່າເປັນຂ້າທາດອີກຕໍ່ໄປ ແຕ່ຍາມນີ້ແຮງດີກວ່າການ
ເປັນຂ້າທາດ ເຂົາໄດ້ເປັນເພື່ອນຊຶ່ງເປັນພີ່ນ້ອງທີ່ຮັກໃນພຣະເຈົ້ານຳ ໂດຍສະ-
ເພາະສຳລັບຂ້ອຍ ແຕ່ຄຶງຊິແຮງຫລາຍກວ່າສຳລັບເຈົ້າ ທັງເປັນເພື່ອນຝ່າຍເນື້ອ-
ໜັງກັບໃນອົງພຣະຜູ້ເປັນເຈົ້ານຳ
17 ຈັ່ງຊັ້ນ ຄັ່ນເຈົ້າຖືວ່າຂ້ອຍນີ້ເປັນໝູ່ຮ່ວມງານຂອງເຈົ້າ ກໍໃຫ້ຮັບເຂົາໄວ້ ຄືຮັບ
ຕົວຂ້ອຍເດີ້
18 ແຕ່ວ່າ ຄັ່ນເຂົາໄດ້ເຮັດຜິດອີຫຍັງຕໍ່ເຈົ້າ ຫລືເປັນໜີ້ອີຫຍັງເຈົ້າ ກໍໃຫ້ເຈົ້າເອົາ
ຈາກຂ້ອຍ
19 ຂ້ອຍ ໂປໂລ ນີ້ ໄດ້ຂຽນນີ້ໄວ້ດ້ວຍມືຂອງຂ້ອຍເອງ ຂ້ອຍຊິຈ່າຍໃຫ້ຢູ່ດອກ
ແລ້ວຊິບໍ່ອ້າງເລື່ອງທີ່ເຈົ້າເປັນໜີ້ບຸນຄຸນຂ້ອຍ ຮອດໂຕຂອງເຈົ້າເອງຊ້ຳ
20 ເອີ້ ນ້ອງເອີຍ ຂ້ອຍຂໍຄວາມຊົມຊື່ນຍິນດີໃນອົງພຣະຜູ້ເປັນເຈົ້າໂດຍທາງເຈົ້າ
ເຖີດ ກະລຸນາໜູນນ້ຳໃຈໃຫ້ຂ້ອຍໃນອົງພຣະຜູ້ເປັນເຈົ້ານຳແໜ່
21 ຂ້ອຍມີຄວາມໝັ້ນໃຈໃນໂຕເຈົ້າ ທີ່ວ່າເຈົ້າຊິຮັບຟັງ ຈັ່ງໄດ້ຂຽນມາຍັງເຈົ້າ ຍ້ອນ
ຂ້ອຍຮູ້ຢູ່ວ່າ ເຈົ້າຊິເຮັດຫລາຍກວ່າທີ່ຂ້ອຍໄດ້ຂໍອີກຊ້ຳ
22 ອີກແນວໜຶ່ງ ຂໍເຈົ້າໄດ້ຈັດກຽມທີ່ພັກໄວ້ສຳລັບຂ້ອຍນຳແໜ່ ຍ້ອນຂ້ອຍເຊື່ອວ່າ
ຊິໄດ້ມາຫາມາຍາມເຈົ້າອີກ ຕາມຄຳອະທິຖານຂອງເຈົ້ານັ້ນ
23 ສ່ວນ ນາຍ ເອປາຟາ ນັ້ນ ຜູ້ຖືກຈອງຈຳໄວ້ນຳຂ້ອຍໃນ ພຣະເຢຊູຄຣິດ ຢູ່ທາງນີ້
ໄດ້ຝາກຄວາມຄຶດຮອດມາຍັງເຈົ້ານຳ

24 พ้อมทัง มาระโก อาริซะตาไຂ เดมา ກັບ ลูภา ผู้เป็นໝູ່ຮ່ວມງານກັບ
ຂ້ອຍ ໄດ້ຝາກຄວາມ ຄິດຮອດມາຍັງເຈົ້ານຳ
25 ຂໍພຣະກະລຸນາທິຄຸນຂອງອົງພຣະເຢຊູຄຣິດເຈົ້າຂອງເຮົາ ດຳລົງຢູ່ກັບຈິດວິນ-
ຍານຂອງເຈົ້າເຖີ້ນ ອາເມນ

*[ຂຽນຈາກ ໂຣມ ເຖິງ ຟີເລໂມນ ແລ້ວສົ່ງໂດຍ ໂອເນສິໂມ ຜູ້ເປັນຂ້າທາດຮັບໃຊ້]*

# ເຮັບເຣີ

## ເຮັບເຣີ ບົດທີ 1

1:1 ໃນສະໄໝກ່ອນ ພຣະເຈົ້າເຄີຍເວົ້າເຄີຍຈາກັບປູ່ຍ່າຕາຍາຍຂອງພວກເຮົາ
ເປັນເທື່ອເປັນຍາມໂດຍວິທີແນວຕ່າງໆ ຜ່ານທາງຜູ້ເປັນປາກເປັນສຽງຂອງເພິ່ນ
1:2 ແຕ່ໃນສະໄໝຄູ່ມື້ນີ້ ເພິ່ນໄດ້ເວົ້າໄດ້ຈາກັບພວກຄົນເຮົາໂດຍຜ່ານທາງ ພຣະ-
ບຸດ ຂອງເພິ່ນ ແມ່ນຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງໃຫ້ເປັນຜູ້ມີກຳມະສິດໃນໝົດຄູ່ອັນ
ຄູ່ແນວ ຊຶ່ງໂດຍທາງ ພຣະບຸດ ນັ້ນ ເພິ່ນໄດ້ສ້າງກັບການຈັກກະວານທັງຫລາຍນຳ
1:3 ຊຶ່ງ ພຣະບຸດ ນັ້ນ ປະກອບດ້ວຍແສງບາລະມີອັນຮຸ່ງເຮືອງຂອງພຣະເຈົ້າ ກັບ
ເປັນພາບລັກຂອງເພິ່ນຢ່າງແທ້ໆ ທັງເປັນຜູ້ທີ່ຄ້ຳຈຸນຮັກສາໝົດຄູ່ອັນຄູ່ແນວໄວ້
ໃນຈັກກະວານໃຫ້ຄົງຢູ່ ໂດຍຄຳສັ່ງອັນມີລິດອຳນາດຂອງເພິ່ນ ແລ້ວຕອນເພິ່ນ
ໄດ້ຊຳລະລ້າງບາບຂອງຄົນເຮົາດ້ວຍເພິ່ນເອງໃຫ້ສິ້ນສຸດແລ້ວ ເພິ່ນຈັ່ງໄດ້ປະ-
ທັບຢູ່ທາງຂວາຂອງພຣະເຈົ້າ ຜູ້ເພິ່ນປະກອບດ້ວຍບາລະມີໃນທີ່ສູງສຸດ
1:4 ຈັ່ງໄດ້ຮັບຖານະອັນໃຫຍ່ຍິ່ງກວ່າພວກເທວະທູດທັງຫລາຍນັ້ນ ຄືເພິ່ນມີພຣະ-
ນາມທີ່ປະເສີດກວ່າພວກເຂົາ ໂດຍກຳມະສິດໃນມໍລະດົກຂອງເພິ່ນ
1:5 ຄື ມີເທວະທູດອົງໃດທີ່ພຣະເຈົ້າເຄີຍເວົ້າວ່າ "ທ່ານເປັນບຸດຂອງເຮົາ ແມ່ນ
ມື້ນີ້ເນາະ ເຮົາໃຫ້ການກຳເນີດແກ່ທ່ານ " ແລ້ວຍັງເວົ້າອີກວ່າ "ເຮົາຊິເປັນຄືພໍ່
ຂອງທ່ານ ແລ້ວທ່ານຊິເປັນຄືບຸດຂອງເຮົາ"
1:6 ແລ້ວອີກເທື່ອໜຶ່ງ ບັດພຣະເຈົ້າໃຫ້ ພຣະບຸດ ລູກ ຂອງເພິ່ນເກີດມາໃນໂລກ
ເພິ່ນຈັ່ງເວົ້າວ່າ *"ໃຫ້ພວກເທວະທູດທັງປວງຂອງເຮົາຂາບໄຫວ້ທ່ານເດີ້"*

1:7 ແລ້ວສ່ວນພວກເທວະທູດນັ້ນ ພຣະເຈົ້າກ່າວອີກວ່າ "ທ່ານໄດ້ບັນດານໃຫ້ເທ-
ວະທູດຂອງທ່ານເປັນດວງວິນຍານ ກັບໃຫ້ເປັນຜູ້ຮັບໃຊ້ຂອງທ່ານ ອັນເປັນຄື
ແປວໄຟ"
1:8 ແຕ່ສຳລັບ ພຣະບຸດ ນັ້ນ ເພິ່ນວ່າ "ລາຊະບັນລັງຂອງທ່ານຄົງຢູ່ເປັນນິດ ແລ້ວ
ຄະທາອັນຊອບທຳນັ້ນເປັນສັນຍະລັກຂອງລາຊະອານາຈັກທ່ານ
1:9 ຄືທ່ານຮັກຄວາມຊອບທຳ ແລ້ວກຽດຊັງຊັງແນວບໍ່ເປັນທຳ ຈັ່ງຊັ້ນ ພຣະເຈົ້າ
ຂອງທ່ານໄດ້ເຈີມທ່ານດ້ວຍນ້ຳມັນແຫ່ງຄວາມຊົມຊື່ນຍິນດີຫລາຍກວ່າພວກສະ-
ຫາຍຂອງທ່ານນັ້ນ"
1:10 ກັບວ່າ "ໃນທຳອິດນັ້ນ ທ່ານປະລະບຽງ ໄດ້ວາງຮາກຖານຂອງແຜ່ນດິນໂລກ
ແລ້ວຟ້າສະຫວັນເປັນທີ່ສະແດງຝີມືຂອງທ່ານ
1:11 ແນວໝູ່ນັ້ນກໍຊິພັງທະລາຍພິນາດໄປ ແຕ່ທ່ານດຳລົງຢູ່ຕະຫລອດການ ແນວ
ໝູ່ນັ້ນກໍຊິເກົ່າແກ່ໄປຄືກັນກັບເສື້ອຜ້າໜ້າແພ
1:12 ແລ້ວທ່ານຊິພັບແນວໝູ່ນັ້ນໄວ້ຄືເສື້ອຄຸມ ຊຶ່ງມັນຊິຖືກປ່ຽນແປງໄປ ແຕ່ວ່າ
ທ່ານຊິຄົງຢູ່ຄືເກົ່າ ແລ້ວມື້ເດືອນປີຂອງທ່ານຊິບໍ່ມີສຳເລັດເລີຍ"
1:13 ແຕ່ວ່າເຄີຍມີເທວະທູດອົງໃດແໜ່ ທີ່ພຣະເຈົ້າເຄີຍເວົ້າວ່າ "ເຊີນນັ່ງຢູ່ທາງ
ຂວາຂອງເຮົາເຖີ ຈົນກວ່າເຮົາຊິເຮັດໃຫ້ພວກສັດຕູຂອງທ່ານເປັນຕັ່ງພັກຕີນຂອງ
ທ່ານ"
1:14 ຄື ພວກເທວະທູດທັງຫລາຍນັ້ນ ເປັນວິນຍານຮັບໃຊ້ທີ່ຖືກໃຊ້ອອກໄປຮັບໃຊ້
ເບິ່ງແຍງຜູ້ຄົນທັງຫລາຍ ທີ່ຊິຮັບຄວາມລອດພົ້ນບໍ່ແມ່ນບໍ້

## ເຮັບເຣີ ບົດທີ 2

2:1 ຈັ່ງຊັ້ນ ພວກເຮົາຄວນຊິໃສ່ໃຈຢ່າງຈິງຈັງໃນຖ້ອຍຄຳແນວທີ່ພວກເຮົາໄດ້ຍິນ
ໄດ້ຟັງມາແລ້ວນັ້ນ ເພື່ອພວກເຮົາຊິບໍ່ຫລົງລອຍອອກໄປ
2:2 ຄື ຄັນຖ້ອຍຄຳທີ່ໃຫ້ມາທາງເທວະທູດນັ້ນ ປາກົດວ່າເປັນຈິງ ແລ້ວຄັນວ່າການ
ລ່ວງລະເມີດ ກັບການບໍ່ເຊື່ອຟັງຄູ່ຢ່າງ ໄດ້ຖືກການຕອບສະໜອງອັນຍຸດຕິທຳ
ແລ້ວ

2:3 ພວກຄົນເຮົາຊິພົ້ນໄດ້ຈັ່ງໃດຄັ່ນເຮົາຊິລະເລີຍຕໍ່ຄວາມລອດພົ້ນອັນໃຫຍ່-
ຫລວງນີ້ ທີ່ອົງພຣະຜູ້ເປັນເຈົ້າໄດ້ເລີ່ມກ່າວເຖິງມາກ່ອນ ແລ້ວໄດ້ຮັບການຢືນ-
ຢັນຈາກຜູ້ຄົນທີ່ໄດ້ຍິນເພິ່ນເວົ້ານັ້ນ
2:4 ຊຶ່ງພຣະເຈົ້າໄດ້ສະໜັບສະໜູນ ໂດຍເຄື່ອງໝາຍອັນສຳຄັນ ກັບແນວເປັນຕາ-
ງຶດ ພ້ອມທັງການອັດສະຈັນຕ່າງໆ ຊຶ່ງປະກອບດ້ວຍລິດອຳນາດ ກັບພົນສະຫວັນ
ພິເສດຈາກ ພຣະວິນຍານ ຕາມພຣະປະສົງຂອງພຣະເຈົ້າ
2:5 ແລ້ວໂລກໃໝ່ທີ່ຊິມາໃນພາຍໜ້າທີ່ເຮົາເວົ້າມານີ້ ເພິ່ນຊິບໍ່ໄດ້ມອບ ໄວ້ຢູ່ໃນ
ການເບິ່ງແຍງຂອງພວກເທວະທູດດອກ
2:6 ແຕ່ ຕາມມີຄຳພະຍາກອນໜ້ອງໜຶ່ງໃນ ພຣະຄຳ ວ່າ "ມະນຸດເປັນຜູ້ໃດເນາະ
ທີ່ພຣະອົງເຈົ້າຊິຕ້ອງຄຳນຶງເຖິງ ຫລືບຸດມະນຸດເປັນຜູ້ໃດທີ່ພຣະອົງເຈົ້າຊິຕ້ອງ
ເບິ່ງແຍງເອົາ
2:7 ພຣະອົງເຈົ້າໄດ້ກຳນົດໃຫ້ເພິ່ນມີຖານະຕ່ຳກວ່າເທວະທູດພຽງໜ່ອຍໜຶ່ງ ກັບ
ພຣະອົງເຈົ້າ ໄດ້ສວມບາລະມີກັບກຽດເປັນມົງກຸດໃຫ້ເພິ່ນ ແລ້ວໄດ້ຕັ້ງເພິ່ນໄວ້ໃຫ້
ຄອບຄອງຢູ່ເໜືອຝີມືຂອງພຣະອົງເຈົ້າ
2:8 *ຄື ພຣະອົງເຈົ້າໄດ້ມອບໝົດທັງມວນໃຫ້ຢູ່ພາຍໃຕ້ຕີນຂອງເພິ່ນ"* ຈັ່ງຊັ້ນ ໃນ
ການທີ່ພຣະອົງເຈົ້າໄດ້ມອບໝົດຄູ່ແນວໄວ້ໃຫ້ຢູ່ໃຕ້ອຳນາດຂອງເພິ່ນນັ້ນ ກໍບໍ່ມີ
ແນວໃດຈັກອັນເລີຍທີ່ບໍ່ໄດ້ຢູ່ໃຕ້ອຳນາດການປົກຄອງຂອງເພິ່ນ ແຕ່ບັດນີ້ ພວກ
ເຮົາຍັງບໍ່ທັນເຫັນຄູ່ແນວຢູ່ໃຕ້ການປົກຄອງຂອງເພິ່ນ
2:9 ແຕ່ວ່າ ພວກເຮົາໄດ້ເຫັນ ພຣະເຢຊູ ຜູ້ເພິ່ນຮັບສະພາບຕ່ຳກວ່າເທວະທູດພຽງ
ໜ່ອຍໜຶ່ງ ແລ້ວໄດ້ຖືກທຸກທໍລະມານເຖິງຕາຍ ຈັ່ງໄດ້ຮັບສະຫງ່າລາສີກັບພຣະ-
ກຽດເປັນມົງກຸດ ຄືເພິ່ນຊິມຄວາມຕາຍເພື່ອມວນມະນຸດເຮົາຄູ່ຄົນ ຍ້ອນພຣະ-
ກະລຸນາທິຄຸນຂອງພຣະເຈົ້າ
2:10 ຄືສົມຄວນຢູ່ແລ້ວ ຊຶ່ງວ່າສາລະພັດຄູ່ແນວເປັນຂອງເພິ່ນ ຊຶ່ງຄູ່ແນວນັ້ນ ກໍມີ
ມາໂດຍເພິ່ນນຳ ທີ່ເພິ່ນຊິນຳເອົາບຸດຫລາຍໆ ຄົນມາສູ່ສະຫງ່າລາສີ ເພື່ອເພິ່ນຊິ
ເປັນປະລະບຽງ ເປັນນາຍແຫ່ງຄວາມລອດພົ້ນຂອງພວກເຂົາ ຊຶ່ງເຖິງທີ່ສຳເລັດ
ໂດຍການທົນທຸກທໍລະມານຂອງເພິ່ນ

2:11 ໂດຍວ່າ ທັງຜູ້ເພິ່ນທີ່ເຮັດໃຫ້ພວກເຂົາບໍລິສຸດ ກັບພວກເຂົາທີ່ພວມຮັບການ
ບໍລິສຸດນັ້ນ ກໍເປັນອັນໜຶ່ງອັນດຽວກັນ ຈັ່ງຊັ້ນ ເພິ່ນຈັ່ງບໍ່ລະອາຍເລີຍທີ່ຊິເອີ້ນ
ພວກເຂົາວ່າພີ່ນ້ອງ
2:12 ຈັ່ງຊັ້ນ ເພິ່ນຈັ່ງເວົ້າວ່າ "ເຮົາຊິປະກາດພຣະນາມຂອງພຣະອົງເຈົ້າໃຫ້ພີ່ນ້ອງ
ຂອງເຮົາ ເຮົາຊິຮ້ອງເພງສັນລະເສີນພຣະອົງເຈົ້າຢູ່ລະຫວ່າງກາງກຸ່ມຜູ້ເຊື່ອ"
2:13 ກັບໄດ້ເວົ້າອີກວ່າ "ເຮົາຊິໄວ້ວາງໃຈໃນພຣະອົງເຈົ້າ" ແລ້ວອີກວ່າ "ເຮົາເອງ
ກໍຢູ່ບ່ອນນີ້ ກັບບຸດທັງຫລາຍທີ່ພຣະເຈົ້າໄດ້ປະທານໃຫ້ເຮົາ"
2:14 ຄື ໃນກໍລະນີທີ່ພວກບຸດທັງຫລາຍໄດ້ມີສ່ວນຮ່ວມເປັນເລືອດເນື້ອໜັງ ໃນທໍາ-
ນອງດຽວກັນເພິ່ນເອງກໍໄດ້ສວມສະພາບເປັນເລືອດເນື້ອໜັງຄືກັນ ເພື່ອໂດຍ
ການຕາຍນັ້ນ ເພິ່ນຊິທໍາລາຍຜູ້ນັ້ນທີ່ເຄີຍມີອໍານາດແຫ່ງຄວາມຕາຍ ຄືພະຍາ-
ມານຊາຕານນັ້ນເນາະ
2:15 ແລ້ວຈັ່ງປົດປ່ອຍຜູ້ຄົນທັງຫລາຍທີ່ຢ້ານຄວາມຕາຍໃຫ້ອອກມາ ຄືຜູ້ທີ່ຖືກ
ຜູກມັດໄວ້ໃຫ້ເປັນຂ້າທາດຂອງມັນຕະຫລອດຊົ່ວຊີວິດ
2:16 ຄວາມຈິງແລ້ວ ເພິ່ນກໍບໍ່ໄດ້ຊ່ອຍເຫລືອພວກເທວະທູດ ແຕ່ໄດ້ຊ່ອຍເຫລືອພີ່-
ນ້ອງຜູ້ເປັນເຊື້ອສາຍຂອງເຖົ້າ ອັບຣາຮາມ ນັ້ນ
2:17 ຈັ່ງຊັ້ນ ເພິ່ນໄດ້ຮັບສະພາບຄືກັນກັບພີ່ນ້ອງຄົນເຮົາໃນໝົດທູ່ຢ່າງ ເພື່ອຊິໄດ້
ເປັນມະຫາປະໂລຫິດຂອງເຂົາ ມີຄວາມເມດຕາ ຊື່ສັດພັກດີໃນທູ່ຢ່າງທີ່ກ່ຽວກັບ
ພຣະເຈົ້າ ເພື່ອຖວາຍເຄື່ອງບູຊາທີ່ຊິລົບລ້າງຄວາມຜິດບາບຂອງຄົນເຮົາທັງ-
ຫລາຍ
2:18 ຊຶ່ງໃນການທີ່ເພິ່ນເອງໄດ້ທົນທຸກທໍລະມານນັ້ນ ເພິ່ນຈັ່ງໄດ້ຜ່ານການທົດລອງ
ຈັ່ງຊັ້ນ ເພິ່ນສາມາດໜູນໃຈຊ່ອຍຜູ້ທີ່ຖືກການທົດລອງໄດ້

## ເຮັບເຣີ ບົດທີ 3

3:1 ຈັ່ງຊັ້ນ ພີ່ນ້ອງຜູ້ບໍລິສຸດທັງຫລາຍເອີຍ ຜູ້ມີສ່ວນຮ່ວມໃນການເອີ້ນການເຊີນ
ຈາກສະຫວັນ ໃຫ້ພິຈາລະນາເພິ່ນ ຜູ້ທີ່ເປັນອັກຄະສາວົກໃຫຍ່ ກັບເປັນມະຫາ-
ປະໂລຫິດ ທີ່ພວກເຮົາຮັບປາກໄວ້ວ່າໄດ້ເຊື່ອໃນເພິ່ນ ຄືອົງ ພຣະເຢຊູຄຣິດ ນັ້ນ
ເນາະ

3:2 ແມ່ນຜູ້ທີ່ຊື່ສັດພັກດີຕໍ່ພຣະເຈົ້າ ຜູ້ທີ່ແຕ່ງຕັ້ງເພິ່ນໄວ້ ຄືກັນກັບເຖົ້າ ໂມເຊ ໄດ້
ຊື່ສັດພັກດີໃນການເບິ່ງແຍງຄົນທັງຫລາຍໃນເຮືອນຂອງພຣະເຈົ້າ
3:3 ແລ້ວສ່ວນ ພຣະເຢຊູ ນັ້ນ ເພິ່ນສົມຄວນມີກຽດຫລາຍກວ່າເຖົ້າ ໂມເຊ ເປັນຢ່າງ
ຍິ່ງ ຄືກັນກັບທີ່ຜູ້ສ້າງເຮືອນມີກຽດຫລາຍກວ່າເຮືອນທີ່ເພິ່ນໄດ້ສ້າງນັ້ນ
3:4 ຄື ເຮືອນຄູ່ຫລັງກໍຕ້ອງມີຜູ້ອອກແບບສ້າງ ແຕ່ວ່າຜູ້ທີ່ສ້າງໝົດຄູ່ອັນຄູ່ແນວນັ້ນ
ກໍຄືພຣະເຈົ້າ
3:5 ຝ່າຍເຖົ້າ ໂມເຊ ນັ້ນ ລາວ ຈິ່ງຮັກພັກດີຕໍ່ໜ້າທີ່ເປັນຜູ້ຮັບໃຊ້ເບິ່ງແຍງເຮືອນ
ຂອງພຣະເຈົ້າ ຊຶ່ງນີ້ກໍເປັນຫຼັກຖານຢືນຢັນເຖິງ ລາວ ໃນເຫດການແນວຕ່າງໆ ທີ່
ຊິມີການເລົ່າຕໍ່ກັນມາໃນພາຍຫລັງ
3:6 ແຕ່ສຳລັບ ພຣະຄຣິດ ນັ້ນ ໃນຖານະວ່າເປັນ ພຣະບຸດ ເໜືອເຮືອນຂອງເພິ່ນ
ຊຶ່ງແມ່ນພວກພວກເຮົາ ຄັ່ນມີການຢຶດໝັ້ນ ມີຄວາມຊົມຊື່ນຍິນດີໃນຄວາມຫວັງ
ນັ້ນ ຢ່າງໝັ້ນຄົງຈົນຮອດບັ້ນປາຍ
3:7 ຈັ່ງຊັ້ນ ຕາມທີ່ ພຣະວິນຍານ ໄດ້ເວົ້າໄວ້ແລ້ວວ່າ "ມື້ນີ້ ຄັ່ນພວກເຈົ້າຊິເປີດໃຈ
ຟັງພຣະສຸລະສຽງຂອງເພິ່ນ
3:8 ກໍຢ່າໃຫ້ຈິດໃຈຂອງພວກເຈົ້າແຂງກະດ້າງໄປ ຄືກັນກັບພວກຄົນໃນສະໄໝ
ເຖົ້າ *ໂມເຊ* ທີ່ກະບົດໃນຄາວທີ່ເຂົາຖືກທົດລອງໃນຖິ່ນແຫ້ງແລ້ງນັ້ນ
3:9 ຊຶ່ງປູ່ຍ່າຕາຍາຍຂອງພວກເຈົ້າ ເຖິງແມ່ນວ່າເຂົາໄດ້ເຫັນການເບິ່ງແຍງຂອງ
ເຮົາຕະຫລອດສີ່ສິບປີ ເຂົາກໍຍັງລອງໃຈເຮົາຢ່າງບໍ່ຢູ່ບໍ່ເຊົາ
3:10 ຍ້ອນເຫດນັ້ນເນາະ ເຮົາຈັ່ງກ້ຽວໂກດພວກຄົນຍຸກນັ້ນ ຈັ່ງໄດ້ເວົ້າໄວ້ວ່າ
'ພວກເຂົາຫລົງຜິດຢູ່ບໍ່ເຊົາ ເຂົາບໍ່ຮູ້ຈັກທາງຂອງເຮົາເລີຍ'
3:11 ຈັ່ງຊັ້ນ ເຮົາຈັ່ງຄຳສາບານດ້ວຍຄວາມໂມໂຫວ່າ 'ຄົນພວກນີ້ຊິບໍ່ເຂົ້າສູ່ການ
ພັກຜ່ອນຍ່ອນໃຈຂອງເຮົາເລີຍ'"
3:12 ພີ່ນ້ອງທັງຫລາຍ ເອີຍ ໃຫ້ລະວັງໂຕໃຫ້ດີເດີ້ ເພື່ອຊິບໍ່ມີຜູ້ໜຶ່ງຜູ້ໃດໃນພວກ
ເຈົ້າມີໃຈຊົ່ວທີ່ເຕັມໄປດ້ວຍຄວາມບໍ່ເຊື່ອ ໄດ້ຫລົງຈາກພຣະເຈົ້າໄປ ຜູ້ເພິ່ນທີ່ດຳ-
ລົງຢູ່

3:13 ແຕ່ໃຫ້ເຕືອນສະຕິຊຶ່ງກັນແລະກັນຢູ່ຊູ່ມື້ຊູ່ເວັນ ທີ່ເອີ້ນກັນວ່າ *"ມື້ນີ້"* ເພື່ອຊິບໍ່
ມີຜູ້ໜຶ່ງຜູ້ໃດໃນພວກເຈົ້າມີໃຈແຂງກະດ້າງໄປ ຍ້ອນການຫລອກລວງຂອງບາບ
3:14 ຄືພວກເຮົາຊິມີສ່ວນຮ່ວມໃນ ພຣະຄຣິດ ໄດ້ ຄັ່ນເຮົາຊິຖືເອົາໄວ້ໃນຄວາມໝັ້ນ
ໃຈທີ່ເຮົາມີແຕ່ເລີ່ມແຮກ ຈົນຮອດປັ້ນປາຍ
3:15 ຄືມີຖ້ອຍຄຳໄວ້ວ່າ "ມື້ນີ້ ໃນເວລານີ້ ຄັ່ນພວກເຈົ້າທັງຫລາຍຊິຟັງພຣະສຸລະ-
ສຽງຂອງເພິ່ນ ຢ່າໃຫ້ຈິດໃຈຂອງພວກເຈົ້າແຂງກະດ້າງໄປເດີ້ ຄືກັນກັບຕອນ
ການກະບົດນັ້ນ"
3:16 ຄືມີໃຜແໜ່ ທີ່ບັດໄດ້ຍິນພຣະສຸລະສຽງນັ້ນ ແລ້ວກໍຍັງກະບົດຢູ່ ແມ່ນຄູ່ຄົນທີ່
ເຖົ້າ ໂມເຊ ໄດ້ນຳອອກຈາກປະເທດ ເອຢິບ ໃນສະໄໝແຕ່ກີ້ນັ້ນ ບໍ່ແມ່ນບໍ້
3:17 ບັດນີ້ ແມ່ນໃຜທີ່ພຣະເຈົ້າກ້ຽວໂກດຕະຫລອດສີ່ສິບປີນັ້ນ ບໍ່ແມ່ນຄົນໝູ່ນັ້ນບໍ້
ທີ່ເຮັດບາບ ແລ້ວຊາກສົບຂອງພວກເຂົາລົ້ມລົງຢູ່ໃນຖິ່ນແຫ້ງແລ້ງນັ້ນ
3:18 ແລ້ວແມ່ນໃຜ ທີ່ເພິ່ນໄດ້ຄຳສາບານວ່າ ເຂົາຊິບໍ່ໄດ້ເຂົ້າສູ່ການພັກຜ່ອນຍ່ອນ-
ໃຈຂອງເພິ່ນ ນອກຈາກຄົນໝູ່ນັ້ນທີ່ບໍ່ເຊື່ອຟັງ
3:19 ຈັ່ງຊັ້ນ ສະຫລຸບແລ້ວ ເຮົາຈັ່ງເຫັນໄດ້ວ່າ ພວກເຂົາບໍ່ມີສິດທີ່ຊິເຂົ້າໄປໄດ້
ຍ້ອນຄວາມບໍ່ເຊື່ອ

## ເຮັບເຣີ ບົດທີ 4

4:1 ຈັ່ງຊັ້ນ ບັດຍັງມີຄຳໝັ້ນສັນຍາຄົງໄວ້ຢູ່ ທີ່ຊິເຂົ້າສູ່ການພັກຜ່ອນຍ່ອນໃຈຂອງ
ເພິ່ນ ກໍຂໍໃຫ້ພວກເຮົາມີຄວາມເຄົາລົບ ຢ້ານວ່າຊິມີຜູ້ໃດຜູ້ໜຶ່ງໃນພວກເຈົ້າຂາດ
ສິດທີ່ຊິເຂົ້າໄປໄດ້
4:2 ຄື ແທ້ຈິງແລ້ວ ຂ່າວປະເສີດນັ້ນໄດ້ປະກາດຕໍ່ພວກເຮົາຢູ່ແລ້ວ ພ້ອມທັງຕໍ່ພວກ
ປູ່ຍ່າຕາຍາຍນຳ ແຕ່ວ່າຖ້ອຍຄຳທີ່ພວກເຂົາໄດ້ຍິນບໍ່ໄດ້ເກີດຜົນອິຫຍັງເລີຍ
ຍ້ອນວ່າເຂົາຜູ້ໄດ້ຍິນນັ້ນບໍ່ໄດ້ປະສົມກັບຄວາມເຊື່ອ
4:3 ຊຶ່ງສ່ວນພວກເຮົາຜູ້ທີ່ໄດ້ຮັບເຊື່ອກໍໄດ້ເຂົ້າສູ່ການພັກຜ່ອນຍ່ອນໃຈນັ້ນແລ້ວ
ແຕ່ສ່ວນພວກຄົນຜູ້ທີ່ບໍ່ຍອມເຊື່ອ ເພິ່ນກໍໄດ້ກ່າວໄວ້ວ່າ *"ເຮົາຄຳສາບານດ້ວຍ
ຄວາມໂມໂຫວ່າ ຄົນໝູ່ນັ້ນຊິບໍ່ໄດ້ເຂົ້າສູ່ການພັກຜ່ອນຍ່ອນໃຈຂອງເຮົາເລີຍ"*
ແມ່ນແຕ່ວ່າ ກິດຈະການ ນັ້ນສຳເລັດແລ້ວຕັ້ງແຕ່ເພິ່ນວາງຮາກຖານຂອງໂລກ

4:4 ຄືມີຕອນໜຶ່ງໃນ ພຣະຄຳ ທີ່ເພິ່ນເຄີຍກ່າວເຖິງມື້ທີເຈັດຈັ່ງຊີ້ວ່າ "ຄືໃນມື້ທີເຈັດ
ນັ້ນ ພຣະເຈົ້າໄດ້ພັກຜ່ອນຍ່ອນໃຈຈາກການງານຂອງເພິ່ນທັງໝົດ"
4:5 ແລ້ວໄດ້ເວົ້າຕໍ່ອີກວ່າ "ພວກນັ້ນຊິບໍ່ໄດ້ເຂົ້າສູ່ການພັກຜ່ອນຍ່ອນໃຈຂອງເຮົາ
ເລີຍ"
4:6 ຈັ່ງຊັ້ນ ກໍຍັງມີຊ່ອງທາງເປີດໄວ້ຢູ່ ວ່າຊິຕ້ອງມີຜູ້ລາງຄົນເຂົ້າສູ່ການພັກຜ່ອນ
ຍ່ອນໃຈໄດ້ ແຕ່ສ່ວນຜູ້ຄົນທີ່ຮັບການປະກາດແຕ່ໃນຄາວກ່ອນນັ້ນ ເຂົາຂາດສິດ
ທີ່ຊິເຂົ້າໄດ້ເລີຍ ຍ້ອນຄວາມບໍ່ເຊື່ອຟັງຂອງເຂົາ
4:7 ແລ້ວເພິ່ນຍັງກຳນົດມື້ໜຶ່ງໄວ້ອີກ ໂດຍເວົ້າຜ່ານທາງກະສັດ ດາວິດ ວ່າ "ມື້ນີ້
ຄັນພວກເຈົ້າຊິຟັງພຣະສຸລະສຽງຂອງພຣະເຈົ້າ ກໍຢ່າໃຫ້ໃຈຂອງພວກເຈົ້າແຂງ
ກະດ້າງໄປເດີ້"
4:8 ຄືວ່າ ຄັນເຖົ້າ ໂຢຊວຍ ໃຫ້ພວກເຂົາເຂົ້າສູ່ການພັກຜ່ອນຍ່ອນໃຈນັ້ນໄດ້ແລ້ວ
ພຣະເຈົ້າຄືຊິບໍ່ໄດ້ເວົ້າເຖິງອີກມື້ໜຶ່ງໃນພາຍໜ້ານັ້ນ
4:9 ຈັ່ງຊັ້ນ ກໍຍັງມີການພັກຜ່ອນຍ່ອນໃຈໄວ້ສຳລັບຄົນຂອງພຣະເຈົ້າ
4:10 ຍ້ອນວ່າ ຜູ້ທີ່ໄດ້ເຂົ້າສູ່ການພັກຜ່ອນຍ່ອນໃຈຂອງພຣະເຈົ້າແລ້ວ ຜູ້ນັ້ນກໍໄດ້
ເຊົາເຮັດການງານຂອງໂຕເອງ ຄືກັນກັບທີ່ພຣະເຈົ້າໄດ້ເຊົາເຮັດການງານຂອງ
ເພິ່ນ
4:11 ຈັ່ງຊັ້ນ ຂໍໃຫ້ພວກເຮົາພະຍາຍາມໃສ່ໃຈທີ່ຊິເຂົ້າສູ່ການພັກຜ່ອນຍ່ອນໃຈນັ້ນ
ໃຫ້ໄດ້ ຢ້ານວ່າ ອາດ ມີຜູ້ໜຶ່ງຜູ້ໃດຫລົງໄປຕາມໂຕຢ່າງຂອງພວກນັ້ນທີ່ບໍ່ເຊື່ອ
ຟັງ
4:12 ຍ້ອນວ່າ ພຣະຄຳ ຂອງພຣະເຈົ້າປະກອບດ້ວຍຊີວິດກັບລິດທານຸພາບ ຄົມຍິ່ງ
ກວ່າດາບສອງຄົມປີ້ນໃດໆ ທັງໝົດ ສາມາດແທງຊອດຜ່າຈິດກັບວິນຍານຂອງ
ຄົນອອກຈາກກັນໄດ້ ຕະຫລອດຮອດຂໍ້ກະດູກກັບໄຂໃນກະດູກ ກັບສາມາດພິ-
ຈາລະນາຮູ້ຮອດຄວາມຄຶດກັບຄວາມມຸ້ງໝາຍໃນໃຈຄົນໄດ້
4:13 ແລ້ວກໍບໍ່ມີອີຫຍັງທີ່ຖືກປິດເຊື່ອງໄວ້ຈາກສາຍຕາຂອງເພິ່ນໄດ້ ແຕ່ໝົດຄູ່ອັນຄູ່
ແນວປາກົດແຈ້ງຈ່າງປ່າງຕໍ່ສາຍຕາຂອງເພິ່ນຢູ່ແລ້ວ ຜູ້ທີ່ເຮົາຄູ່ຄົນຊິຕ້ອງຣາຍ-
ງານໂຕ

4:14 ຈັ່ງຊັ້ນ ບັດເຫັນວ່າ ເຮົາມີມະຫາປະໂລຫິດທີ່ໄດ້ຜ່ານຟ້າສະຫວັນໄປແລ້ວ ຄື
ພຣະເຢຊູຄຣິດ ຜູ້ເປັນ ພຣະບຸດ ຂອງພຣະເຈົ້າ ຈັ່ງຂໍໃຫ້ພວກເຮົາຍຶດໝັ້ນໃນ
ການທີ່ໄດ້ຮັບປາກວ່າເຊື່ອແລ້ວ
4:15 ຄື ເຮົາບໍ່ໄດ້ມີມະຫາປະໂລຫິດທີ່ບໍ່ສາມາດເຫັນອົກເຫັນໃຈໃນຄວາມອ່ອນແອ
ຂອງຄົນເຮົາ ແຕ່ໄດ້ຖືກທົດລອງໃຈຄືກັນກັບຄົນເຮົາໃນຄູ່ຢ່າງ ເຖິງຈັ່ງຊັ້ນ ເພິ່ນກໍ
ຍັງບໍ່ມີບາບເລີຍ
4:16 ຈັ່ງຊັ້ນ ຂໍໃຫ້ເຮົາທັງຫລາຍມີໃຈກ້າ ເຂົ້າມາເຖິງພຣະທີ່ນັ່ງແຫ່ງພຣະກະລຸນາ-
ທິຄຸນຂອງເພິ່ນ ເພື່ອເຮົາຊິຮັບຄວາມເມດຕາ ກັບພຣະກະລຸນາທິຄຸນທີ່ຊິຊ່ອຍເຮົາ
ໃນຍາມຕ້ອງການ

## ເຮັບເຣີ ບົດທີ 5

5:1 ຄື ມະຫາປະໂລຫິດແຕ່ລະຄົນ ໄດ້ຮັບການເລືອກ ແຕ່ງຕັ້ງໄວ້ແທນຄົນເຮົາ ໃນ
ການງານກ່ຽວກັບພຣະເຈົ້າ ເພື່ອເຂົາຊິນຳຂອງຝາກຂອງຕ້ອນກັບເຄື່ອງບູຊາມາ
ຖວາຍ ເປັນການລົບລ້າງບາບຂອງຄົນເຮົາ
5:2 ມະຫາປະໂລຫິດຜູ້ນັ້ນສາມາດສະແດງຄວາມເມດຕາຕໍ່ຄົນບໍ່ຮູ້ຈັກທິບຈັກທາງ
ທີ່ພວມຫລົງໄປ ດ້ວຍວ່າພວກທ່ານເອງກໍຍັງມີຄວາມອ່ອນແອຂອງໂຕຄືກັນ
5:3 ຍ້ອນເຫດຄວາມອ່ອນແອນັ້ນ ມະຫາປະໂລຫິດ ຜູ້ຖວາຍເຄື່ອງບູຊາ ໄດ້ມີໜ້າ-
ທີ່ຖວາຍແທນປະຊາຊົນ ພ້ອມກັບໂຕເອງນຳ ເພື່ອເປັນການລົບລ້າງບາບ
5:4 ກັບວ່າ ບໍ່ມີໃຜມີສິດທີ່ຊິຮັບເອົາກຽດນີ້ໄວ້ໃຫ້ເຈົ້າຂອງເອງ ມີແຕ່ຜູ້ທີ່ຮັບການ
ເອີ້ນແຕ່ງຕັ້ງໂດຍພຣະເຈົ້າເທົ່ານັ້ນ ຄືກັນກັບເຖົ້າ ອາໂຣນ ນັ້ນ
5:5 ໃນທຳນອງດຽວກັນ ພຣະຄຣິດ ບໍ່ໄດ້ຫາກຽດຫາຍົດໃຫ້ໂຕເອງ ໃນການເປັນ
ມະຫາປະໂລຫິດນັ້ນ ແຕ່ແມ່ນພຣະເຈົ້າຕ່າງຫາກທີ່ໄດ້ເວົ້ານຳເພິ່ນວ່າ *“ທ່ານ
ເປັນບຸດຂອງເຮົາ ມື້ນີ້ເນາະ ເຮົາໃຫ້ການກຳເນີດແກ່ທ່ານ”*
5:6 ຄືກັນກັບທີ່ເພິ່ນໄດ້ເວົ້າໄວ້ໃນ ພຣະຄຳ ອີກຕອນໜຶ່ງວ່າ “ທ່ານມີຕຳແໜ່ງເປັນ
ປະໂລຫິດ ຕະຫລອດໄປເປັນນິດ ຕາມຍົດຕຳແໜ່ງຂອງທ່ານ *ເມນຄີເຊເດັກ* ນັ້ນ”
5:7 ຊຶ່ງວ່າ ຕອນທີ່ເພິ່ນດຳລົງຢູ່ໃນເນື້ອໜັງ ເພິ່ນໄດ້ຖວາຍຄຳອະທິຖານ ກັບຄຳ
ວິງວອນ ດ້ວຍການຂໍຮ້ອງຮ້ອງໄຫ້ຈົນນ້ຳຕາໄຫລ ຕໍ່ພຣະເຈົ້າຜູ້ສາມາດໂຜດໃຫ້

ເພິ່ນພົ້ນຈາກຄວາມຕາຍໄດ້ ແລ້ວພຣະເຈົ້າໄດ້ຮັບຟັງຍ້ອນໃຈນອບນ້ອມເຄົາ-
ລົບຂອງເພິ່ນ
5:8 ເຖິງແມ່ນວ່າເພິ່ນເປັນ ພຣະບຸດ ເອງ ເພິ່ນກໍຍັງຝຶກຝົນຮຽນຮູ້ໃນການເຊື່ອຟັງ
ໂດຍຄວາມທຸກຍາກລຳບາກທີ່ເພິ່ນໄດ້ອົດທົນເອົາ
5:9 ແລ້ວບັດເພິ່ນເຖິງທີ່ສົມບູນພຽບພ້ອມແລ້ວ ເພິ່ນເອງໄດ້ເປັນເຫດໃຫ້ມີຄວາມ-
ລອດພົ້ນອັນອັນຕະຫລອດໄປເປັນນິດ ເພື່ອຄູ່ຄົນທີ່ເຊື່ອຟັງເພິ່ນ
5:10 ຊຶ່ງພຣະເຈົ້າໄດ້ແຕ່ງຕັ້ງເພິ່ນໃຫ້ເປັນມະຫາປະໂລຫິດຕາມຍົດຕຳແໜ່ງຂອງ
ທ່ານ ເມນຄີເຊເດັກ
5:11 ຊຶ່ງເລື່ອງຂອງເພິ່ນນີ້ເຮົາກໍມີຫລາຍອັນຫລາຍແນວທີ່ຊິເວົ້າ ແຕ່ວ່າມັນຍາກທີ່
ຊິອະທິບາຍໄດ້ ຍ້ອນພວກເຈົ້າກາຍເປັນຄົນຫູຕຶງແລ້ວ
5:12 ເຖິງແມ່ນວ່າ ຈົນຄືນີ້ ພວກເຈົ້າຄວນຊິເປັນຄູສອນໄດ້ແລ້ວ ແຕ່ກໍຍັງຕ້ອງໃຫ້ຜູ້
ອື່ນມາປ້ອນມາສອນຫລັກເກນພື້ນຖານໃນ ພຣະຄຳ ຂອງພຣະເຈົ້າໃຫ້ອີກ ຄື
ພວກເຈົ້າກາຍເປັນເດັກນ້ອຍທີ່ຍັງຕ້ອງກັບໄປກິນນ້ຳນົມອີກ ບໍ່ແມ່ນອາຫານແຂງ
ຂອງຜູ້ໃຫຍ່
5:13 ຄື ສ່ວນຜູ້ໃດທີ່ຍັງກິນແຕ່ປະເພດນ້ຳນົມ ສະແດງວ່າຍັງບໍ່ຊຳນານໃນ ພຣະ-
ຄຳ ເລື່ອງຄວາມຊອບທຳ ຍ້ອນວ່າເຂົາຍັງເປັນເດັກນ້ອຍຢູ່
5:14 ແຕ່ອາຫານປະເພດແຂງນັ້ນ ເປັນອາຫານສະເພາະຄົນທີ່ເປັນຜູ້ໃຫຍ່ ຄືສຳ-
ລັບຜູ້ທີ່ໄດ້ຮັບການຝຶກຊ້ອມແລ້ວ ຈັ່ງສາມາດເບິ່ງອອກໄດ້ທັງແນວຜິດແນວຖືກ

## ເຮັບເຣີ ບົດທີ 6

6:1 ຈັ່ງຊັ້ນ ໃຫ້ເຮົາຜ່ານພົ້ນຄຳສອນພື້ນຖານເລື່ອງ ພຣະຄຣິດ ໄປ ແລ້ວໃຫ້ເຮົາ
ກ້າວໜ້າໄປສູ່ຄວາມບໍລິບູນໃນການເປັນຜູ້ໃຫຍ່ທາງຄວາມເຊື່ອ ຈັ່ງບໍ່ຕ້ອງວາງ
ພື້ນຖານໃນເລື່ອງການກັບໃຈເລື່ອງການກະທຳທີ່ບໍ່ໃຫ້ຊີວິດ ກັບເລື່ອງການຮັບ
ເຊື່ອ
6:2 ກັບຄຳສອນເລື່ອງການຮັບຈຸ່ມນ້ຳ ການວາງມື ການເປັນຂຶ້ນມາຈາກຕາຍ ກັບ
ການພິພາກສາລົງໂທດອັນບໍ່ສຳເລັດນັ້ນ
6:3 ແລ້ວພວກເຮົາກໍຊິໄປເຖິງຢູ່ ຄັ່ນພຣະເຈົ້າອະນຸຍາດ

6:4 ຍ້ອນວ່າ ມັນເປັນໄປບໍ່ໄດ້ເລີຍທີ່ຄົນພວກນັ້ນຊຶ່ງເຄີຍໄດ້ຮູ້ໄດ້ເຫັນຄວາມເປັນ
ຈິງມາແລ້ວ ກັບໄດ້ຊີມເບິ່ງລົດຊາດຂອງສິ່ງດີເລີດຈາກສະຫວັນ ກັບໄດ້ຮ່ວມກັນ
ຮູ້ເຫັນ ກິດຈະການ ຂອງ ພຣະວິນຍານ
6:5 ແລ້ວໄດ້ຊີມເບິ່ງລົດຊາດຂອງ ພຣະຄຳ ອັນດີງາມຂອງພຣະເຈົ້າ ກັບເລື່ອງ
ອຳນາດມະຫັດສະຈັນຕ່າງໆ ອັນຍິ່ງໃຫຍ່ຂອງຍຸກທີ່ຊິມາໃນພາຍໜ້ານັ້ນ
6:6 ຄັນເຂົາຫລົງຍ່າງອອກໄປແລ້ວ ມັນກໍເປັນໄປບໍ່ໄດ້ເລີຍທີ່ຊິໃຫ້ເຂົາຄືນມາກັບ-
ໃຈໄດ້ ຍ້ອນເຂົາໄດ້ປະຕິເສດຄື ພຣະບຸດ ຂອງພຣະເຈົ້າໄວ້ເທິງໄມ້ກາງແຂນ
ອີກເທື່ອໜຶ່ງ ໃຫ້ອັບອາຍໃນທີ່ສາທາລະນະ
6:7 *ພວກນີ້* ປຽບຄືກັນກັບພື້ນແຜ່ນດິນທີ່ໄດ້ດູດດື່ມນ້ຳຝົນທີ່ຕົກລົງມາຢູ່ຢ່າງຕໍ່-
ເນື່ອງ ຈັ່ງມີຜັກມີຫຍ້າງອກຂຶ້ນມາ ເປັນປະໂຫຍດໃຫ້ກັບຜູ້ທີ່ໄດ້ຂູດໄດ້ເຮັດນຳ
ດິນນັ້ນ ເປັນພຣະພອນມາຈາກພຣະເຈົ້າ
6:8 ແຕ່ຄັນວ່າ ດິນນັ້ນມີແຕ່ປົ່ງເປັນສ້ຽນເປັນໜາມ ມັນຊິຖືກປະຕິເສດຖິ້ມ ໃກ້ຊິ
ເຖິງການສາບແຊ່ງແລ້ວ ຊຶ່ງຕອນສຸດທ້າຍກໍຊິຖືກເຜົາໄຟ
6:9 ແຕ່ວ່າ ພີ່ນ້ອງທີ່ຮັກເອີຍ ເຖິງແມ່ນວ່າພວກເຮົາເວົ້າຈັ່ງຊີ້ ກໍຍັງມີຄວາມໝັ້ນໃຈ
ເຖິງພວກເຈົ້າ ເອີ້ ວ່າພວກເຈົ້າຄືຊິໄດ້ດີກວ່ານີ້ຢູ່ດອກ ເຖິງຜົນແຫ່ງຄວາມພົ້ນ
6:10 ຄື ພຣະເຈົ້າບໍ່ໄດ້ຂາດຄວາມຍຸດຕິທຳ ທີ່ເພິ່ນຊິລືມການງານທີ່ພວກເຈົ້າໄດ້
ເຮັດມາແລ້ວ ດ້ວຍຄວາມຮັກແພງ ຊຶ່ງພວກເຈົ້າມີຕໍ່ພຣະນາມຂອງເພິ່ນ ທີ່ພວກ
ເຈົ້າເຄີຍຮັບໃຊ້ຄົນຂອງພຣະເຈົ້າ ແລ້ວກໍຍັງຮັບໃຊ້ຢູ່
6:11 ແລ້ວພວກເຮົາມີຄວາມປາດຖະໜາໃຫ້ພວກເຈົ້າວ່າ ຢາກໃຫ້ຄູ່ຄົນສຳແດງໂຕ
ເອງວ່າ ມີໃຈເຕັມດ້ວຍຄວາມຫວັງອັນໝັ້ນຄົງຈົນກວ່າຊິຮອດບັ້ນປາຍ
6:12 ເພື່ອພວກເຈົ້າຊິບໍ່ກາຍເປັນຄົນຂີ້ຄ້ານເຊີ່ຊ່າ ແຕ່ໃຫ້ເອົາແບບຕາມຄົນຜູ້ທີ່
ອາໄສຄວາມເຊື່ອ ກັບຄວາມໝັ່ນພຽນ ຈັ່ງມີສ່ວນໃນຄຳໝັ້ນສັນຍາເປັນມໍລະດົກ
6:13 ຄື ບັດພຣະເຈົ້າໄດ້ເຮັດຄຳໝັ້ນສັນຍາໄວ້ໃຫ້ເຖົ້າ ອັບຣາຮາມ ນັ້ນ ເພິ່ນຈັ່ງໃຫ້
ຄຳສາບານໄວ້ກັບໂຕເພິ່ນເອງ ຍ້ອນວ່າບໍ່ມີໃຜເປັນໃຫຍ່ເທົ່າເພິ່ນ
6:14 ເພິ່ນຈັ່ງເວົ້າວ່າ “ເຮົາຊິໃຫ້ພອນຕໍ່ເຈົ້າຢ່າງແນ່ນອນ ກັບຊິໃຫ້ເຜົ່າພັນລູກ-
ຫລານຂອງເຈົ້າເພີ່ມທະວີຂຶ້ນຢ່າງຫລາຍ”

6:15 ຈັ່ງຊັ້ນເນາະ ບັດເຖົ້າ ອັບຣາຮາມ ໄດ້ອົດທົນຄອຍຖ້າດ້ວຍຄວາມໝັ້ນພຽນ
ແລ້ວ ລາວກໍໄດ້ຮັບພົນຕາມຄຳໝັ້ນສັນຍານັ້ນ
6:16 ຄື ຄົນມັກມີການຄຳສາບານຕໍ່ໜ້າຜູ້ທີ່ເປັນໃຫຍ່ກວ່າໂຕເອງ ດ້ວຍວ່າ ຄຳ
ສັດຈະນັ້ນເປັນຄຳຢືນຢັນຂັ້ນເດັດຂາດ ໂດຍໄດ້ປິດການບໍ່ລົງລອຍກັນ
6:17 ສ່ວນພຣະເຈົ້າບັດເພິ່ນຢາກຊິສຳແດງໃຫ້ຜູ້ທີ່ຮັບຄຳໝັ້ນສັນຍາເປັນມໍລະດົກ
ນັ້ນຮູ້ໃຫ້ແນ່ໃຈວ່າ ຄວາມຕັ້ງໃຈຂອງເພິ່ນຊິບໍ່ໄດ້ປ່ຽນແປງໄປ ເພິ່ນຈັ່ງໄດ້ໃຫ້ຄຳ-
ສາບານໄວ້ຕາມປະເພນີຂອງຄົນເຮົາ
6:18 ຈັ່ງຊັ້ນ ພວກເຮົາມີຫລັກຄວາມຈິງທີ່ເຊື່ອຖືໄດ້ ດ້ວຍສອງປະການທີ່ບໍ່ມີການ
ປ່ຽນແປງ ຄື ມັນເປັນໄປບໍ່ໄດ້ເລີຍທີ່ພຣະເຈົ້າຊິບໍ່ສັດຊື່ ຊຶ່ງແມ່ນຜູ້ທີ່ພວກເຮົາໜີ
ຮ້ອນມາຫາກໍ່ເຢັນ ຈັ່ງມີການໜຸນໃຈ ມີຄວາມຫວັງທີ່ໝັ້ນຄົງ ຊຶ່ງມີຕັ້ງໄວ້ຢູ່ຕໍ່ໜ້າ-
ຕໍ່ຕາພວກເຮົາ
6:19 ຄວາມຫວັງທີ່ເຮົາຖືເອົາໄວ້ນັ້ນ ເປັນສະໝໍຂອງຈິດວິນຍານຂອງເຮົາທີ່ຄັກແນ່
ກັບໝັ້ນຄົງ ຊຶ່ງໄດ້ເຂົ້າໄປຂ້າງຫລັງຜ້າມ່ານ ເຂົ້າສູ່ທີ່ສັກສິດບໍລິສຸດທີ່ສຸດຢູ່ຕໍ່ໜ້າ
ພຣະເຈົ້າແລ້ວ
6:20 ທີ່ວ່າມີຜູ້ນຳໜ້າທີ່ໄດ້ເຂົ້າໄປກ່ອນເພື່ອຄົນເຮົາແລ້ວ ຄື ພຣະເຢຊູຄຣິດ ຜູ້ໄດ້-
ຮັບການແຕ່ງຕັ້ງໃຫ້ເປັນມະຫາປະໂລຫິດນັ້ນເພື່ອຢູ່ຕະຫລອດການ ຕາມຍົດຕຳ-
ແໜ່ງຂອງທ່ານ ເມນຄີເຊເດັກ ນັ້ນ

# ເຮັບເຣີ ບົດທີ 7

7:1 ຄື ທ່ານ ເມນຄີເຊເດັກ ນີ້ ເປັນກະສັດຂອງເມືອງ ຊາເລັມ ກັບທ່ານເປັນປະໂລ-
ຫິດຂອງພຣະເຈົ້າຜູ້ສູງສຸດ ແມ່ນຜູ້ນີ້ເນາະ ທີ່ໄດ້ຮັບກັບເຖົ້າ ອັບຣາຮາມ ນຳທາງ
ບັດ ລາວ ພວມກັບມາຈາກການສູ້ຮົບຈັດການພວກກະສັດນັ້ນ ແລ້ວທ່ານຈັ່ງ
ອວຍພອນເຖົ້າ ອັບຣາຮາມ ຢູ່ນັ້ນ
7:2 ຊຶ່ງເຖົ້າ ອັບຣາຮາມ ໄດ້ຖວາຍຂອງໜຶ່ງໃນສິບຈາກຂອງ *ຢຶດ* ທັງໝົດໃຫ້ທ່ານ
ເມນຄີເຊເດັກ ຜູ້ມີຊື່ແປວ່າ ກະສັດຜູ້ຍຸດຕິທຳ ເປັນກະສັດຂອງເມືອງ ຊາເລັມ
ຊຶ່ງມີຄວາມໝາຍວ່າ ກະສັດແຫ່ງສັນຕິພາບ

7:3 ແລ້ວທ່ານຜູ້ນີ້ ພໍ່ແມ່ກໍບໍ່ມີ ເຊື້ອສາຍວົງຕະກູນກໍບໍ່ມີ ມື້ເກີດມື້ຕາຍກໍບໍ່ມີ ແຕ່ມີ
ລັກສະນະຄືກັນກັບ ພຣະບຸດ ຂອງພຣະເຈົ້າ ມີຍົດຕຳແໜ່ງເປັນປະໂລຫິດບູຊາຕໍ່
ພຣະເຈົ້າຢູ່ຕະຫລອດໄປເປັນນິດ
7:4 ບັດນີ້ ໃຫ້ຄຶດເບິ່ງ ທ່ານຜູ້ນີ້ຍິ່ງໃຫຍ່ສໍ່າໃດ ທີ່ວ່າຂະໜາດເຖົ້າ ອັບຣາຮາມ ຜູ້
ເປັນພໍ່ຕະກູນຂອງຄົນ ຢິວ ເຮົາ ລາວກໍຍັງໄດ້ຖວາຍໜຶ່ງໃນສິບຈາກຂອງທີ່ຍຶດມາ
ນັ້ນໃຫ້ທ່ານ
7:5 ແທ້ຈິງແລ້ວ ຜູ້ຊາຍໃນເຊື້ອສາຍຂອງ ເລວີ ທີ່ໄດ້ຮັບຕຳແໜ່ງເປັນປະໂລຫິດ
ນັ້ນ ມີຄຳສັ່ງໄວ້ໃນກົດບັນຍັດວ່າ ໃຫ້ພວກເຂົາຮັບຂອງໜຶ່ງໃນສິບລຸດຈາກຂອງທີ່
ພີ່ນ້ອງປະຊາຊົນຖວາຍ ເຖິງແມ່ນວ່າພວກເຂົາໄດ້ເກີດຈາກແອວຂອງ ອັບຣາ-
ຮາມ ຄືກັນ
7:6 ແຕ່ສ່ວນທ່ານ ເມນຄີເຊເດັກ ຜູ້ນີ້ ທ່ານບໍ່ແມ່ນເຊື້ອສາຍຂອງພວກ ເລວີ ແຕ່ກໍ
ຍັງໄດ້ຮັບຂອງໜຶ່ງໃນສິບລຸດຈາກເຖົ້າ ອັບຣາຮາມ ແລ້ວໄດ້ອວຍພອນ ລາວ ຜູ້
ທີ່ໄດ້ຮັບຄຳໝັ້ນສັນຍາທັງຫລາຍຈາກພຣະເຈົ້າ
7:7 ແລ້ວບັດນີ້ ແນວທີ່ຄັດຄ້ານບໍ່ໄດ້ກໍຄືວ່າ ຕາມຫລັກແລ້ວ ຜູ້ທີ່ນ້ອຍກວ່າກໍຕ້ອງ
ເປັນຝ່າຍຮັບພົນຈາກຜູ້ທີ່ໃຫຍ່ກວ່າ
7:8 ຢູ່ບ່ອນນີ້ ຄົນທຳມະດາຊຶ່ງອະນິຈັງກໍຍັງໄດ້ຮັບຂອງຖວາຍໜຶ່ງໃນສິບລຸດ ແຕ່ຢູ່
ພູ້ນ ທ່ານໄດ້ຮັບຂອງຖວາຍໜຶ່ງໃນສິບລຸດ ຊຶ່ງມີຄຳພະຍານເຖິງທ່ານວ່າ ທ່ານ
ດຳລົງຢູ່ເປັນອຳມະຕະ
7:9 ເວົ້າອີກກໍລະນີໜຶ່ງ ແມ່ນແຕ່ຂະໜາດ ເລວີ ເອງ ໄດ້ຮັບຂອງຖວາຍໜຶ່ງໃນສິບ
ລຸດ ລາວກໍຍັງຖວາຍໜຶ່ງໃນສິບລຸດຜ່ານທາງເຖົ້າ ອັບຣາຮາມ ຄືກັນ
7:10 ຄື ແມ່ນແຕ່ ເລວີ ຍັງຢູ່ໃນແອວຂອງພໍ່ບັນພະບຸລຸດເຂົາ ບັດທ່ານ ເມນຄີເຊ-
ເດັກ ໄດ້ຮັບກັບ ອັບຣາຮາມ
7:11 ຈັ່ງຊັ້ນ ຄັ້ນຊິເປັນຄົນດີພ້ອມໄດ້ ໂດຍຕາມລະບົບປະໂລຫິດຂອງຕະກູນ ເລວີ
ນັ້ນ ເປັນຫຍັງຊິຕ້ອງມີລະບົບປະໂລຫິດອີກ ຄືລະບົບຂອງທ່ານ ເມນຄີເຊເດັກ
ຊຶ່ງບໍ່ໄດ້ເປັນຕາມລະບົບ ເລວີ ຂອງເຖົ້າ ອາໂຣນ (ຄືໃນລະບົບ ເລວີ ນັ້ນປະຊາ-
ຊົນໄດ້ຮັບມອບແຕ່ກົດບັນຍັດ)

7:12 ຄືວ່າ ບັດຍາມລະບົບປະໂລຫິດຖືກປ່ຽນໄປແລ້ວ ຈຳເປັນທີ່ວ່າລະບົບກົດ-
ບັນຍັດກໍຊິຕ້ອງປ່ຽນນຳ
7:13 ຄື ທ່ານຜູ້ນັ້ນທີ່ພວມເວົ້າຢູ່ນີ້ ທ່ານກໍຢູ່ໃນວົງຕະກູນອີກຕະກູນໜຶ່ງ ຊຶ່ງຈາກ
ວົງຕະກູນນັ້ນ ບໍ່ເຄີຍມີໃຜເຂົ້າປະຕິບັດໜ້າທີ່ເປັນປະໂລຫິດຢູ່ຕໍ່ໜ້າແທ່ນບູຊາ
ນັ້ນເລີຍ
7:14 ຈັ່ງຊັ້ນ ມັນເຫັນໄດ້ຊັດແລ້ວວ່າ ອົງພຣະຜູ້ເປັນເຈົ້າຂອງເຮົາ ໄດ້ມາຈາກ
ເຊື້ອສາຍວົງຕະກູນ ຢູດາ ຊຶ່ງເຖົ້າ ໂມເຊ ເອງບໍ່ເຄີຍໄດ້ເວົ້າເຖິງເລື່ອງປະໂລຫິດ
ເລີຍ
7:15 ແລ້ວຍິ່ງກວ່ານັ້ນອີກ ຄັ້ນຊິມີປະໂລຫິດອີກຜູ້ໜຶ່ງເປັນຂຶ້ນມາຕາມແບບຢ່າງ
ຂອງທ່ານ ເມນຄີເຊເດັກ ນັ້ນ
7:16 ຊຶ່ງຜູ້ເພິ່ນໄດ້ມາແລ້ວ ແຕ່ບໍ່ແມ່ນຕາມລະບົບກົດບັນຍັດທີ່ໃຊ້ກັບຊີວິດອະນິ-
ຈັງຝ່າຍເນື້ອໜັງ ແຕ່ຕາມລິດເດດທີ່ສາມາດໃຫ້ຊີວິດອຳມະຕະທີ່ບໍ່ຮູ້ຈັກສຳເລັດ
ເລີຍ
7:17 ຊຶ່ງພຣະເຈົ້າໄດ້ຢືນຢັນເຖິງຜູ້ນັ້ນວ່າ "ທ່ານເປັນປະໂລຫິດຕະຫລອດໄປເປັນ-
ນິດ ຕາມຍົດຕຳແໜ່ງຂອງທ່ານ ເມນຄີເຊເດັກ "
7:18 ດ້ວຍວ່າ ຝ່າຍລະບົບກົດບັນຍັດອັນເກົ່ານັ້ນ ກໍໄດ້ຖືກການຍົກເລີກໄປແລ້ວ
ຍ້ອນຄວາມອ່ອນຕໍ່າຕ້ອຍຂອງມັນ ທີ່ບໍ່ສາມາດໃຫ້ຊີວິດໄດ້ ເລີຍບໍ່ມີປະໂຫຍດ
ອີກຕໍ່ໄປ
7:19 ຍ້ອນວ່າ ລະບົບກົດບັນຍັດນັ້ນ ບໍ່ສາມາດທີ່ຊິເຮັດອີຫຍັງໃຫ້ເຖິງຄວາມດີ
ພ້ອມສົມບູນແບບໄດ້ເລີຍ ແຕ່ວ່າພວກເຮົາມີຄວາມຫວັງອັນໝັ້ນຄົງດີກວ່ານັ້ນອີກ
ສາມາດໃຫ້ຄົນເຮົາເຂົ້າມາໃກ້ຊິດກັບພຣະເຈົ້າໄດ້
7:20 ແລ້ວ ເນື່ອງຈາກວ່າ ເພິ່ນບໍ່ໄດ້ຮັບຕຳແໜ່ງເປັນມະຫາປະໂລຫິດໂດຍບໍ່ມີ
ການຮັບປາກກ່າວຄຳສາບານໄວ້ກ່ອນ
7:21 (ຄື ພວກປະໂລຫິດນັ້ນ ໄດ້ເຂົ້າຮັບຕຳແໜ່ງໂດຍບໍ່ຕ້ອງມີການກ່າວຄຳສາ-
ບານໄວ້ກ່ອນ ແຕ່ສ່ວນຜູ້ນີ້ໄດ້ມີການກ່າວຄຳສາບານໄວ້ກ່ອນໂດຍພຣະເຈົ້າ ທີ່
ບອກເພິ່ນວ່າ *"ອົງພຣະຜູ້ເປັນເຈົ້ານັ້ນໄດ້ຄຳສາບານແລ້ວ ຊຶ່ງຊິບໍ່ປ່ຽນໃຈທໍ້ຖອຍ*

*'ທ່ານເປັນມະຫາປະໂລຫິດຢູ່ຕະຫລອດການ ຕາມຢົດຕຳແໜ່ງຂອງທ່ານ ເມນຄີ-
ເຊເດັກ '"* )
7:22 ແລ້ວອັນນີ້ຮັບຮອງໄວ້ວ່າ ພຣະເຢຊູ ໄດ້ເປັນສື່ ໃຫ້ມີພັນທະສັນຍາດີກວ່າ
ລະບົບເດີມນັ້ນ
7:23 ຄື ສ່ວນປະໂລຫິດໃນລະບົບເດີມນັ້ນ ຕ້ອງມີຫລາຍຄົນໄວ້ເພື່ອສືບທອດຕຳແ
ໜ່ງ ຍ້ອນວ່າຄວາມຕາຍຂັດຂວາງ
7:24 ແຕ່ຝ່າຍເພິ່ນຜູ້ນີ້ ເພິ່ນມີຊີວິດອຳມະຕະດຳລົງຢູ່ຕະຫລອດໄປເປັນນິດ ປະ-
ໂລຫິດນັ້ນ ກໍບໍ່ມີການປ່ຽນຕຳແໜ່ງເລີຍ
7:25 ຄັນຈັ່ງຊັ້ນ ເພິ່ນສາມາດຊ່ອຍຄົນທັງຫລາຍໃຫ້ລອດພົ້ນເຖິງທີ່ສຸດ ແມ່ນຜູ້ທີ່
ມາຫາພຣະເຈົ້າໂດຍທາງເພິ່ນ ດ້ວຍວ່າເພິ່ນດຳລົງຢູ່ຕະຫລອດໄປເປັນນິດ ເພື່ອ
ໄກ່ເກ່ຍຕໍ່ພຣະເຈົ້າເພື່ອເຂົາທັງຫລາຍຢູ່ສະເໝີ
7:26 ຄື ມະຫາປະໂລຫິດແບບນີ້ ກໍເໝາະສົມແລ້ວສຳລັບພວກເຮົາ ຄືເພິ່ນເປັນຜູ້
ບໍລິສຸດທີ່ບໍ່ມີກົນອຸບາຍ ບໍ່ມີມົນທິນ ຕ່າງຈາກພວກຄົນບາບ ແລ້ວບັດນີ້ໄດ້ປະທັບ
ຢູ່ໃນທີ່ສູງສຸດ ເໜືອກວ່າຟ້າສະຫວັນຂຶ້ນໄປອີກ
7:27 ຊຶ່ງເພິ່ນບໍ່ຕ້ອງນຳເຄື່ອງບູຊາມາຖວາຍຢູ່ຄູ່ມື້ ຄືກັນກັບພວກມະຫາປະໂລຫິດ
ໝູ່ນັ້ນ ຜູ້ທີ່ຕ້ອງນຳເຄື່ອງຖວາຍບູຊາ ເພື່ອລົບລ້າງຄວາມຜິດບາບຂອງໂຕເອງ
ກ່ອນ ແລ້ວຈັ່ງເພື່ອປະຊາຊົນຕອນຫລັງ ໂດຍວ່າ ເພິ່ນໄດ້ຖວາຍເຄື່ອງບູຊາພຽງ
ແຕ່ເທື່ອດຽວ ບັດຕອນເພິ່ນຖວາຍໂຕເພິ່ນເອງ
7:28 ຍ້ອນວ່າ ຝ່າຍກົດບັນຍັດນັ້ນ ມີແຕ່ແຕ່ງຕັ້ງຄົນທຳມະດາທີ່ອ່ອນກຳລັງໃຫ້-
ເປັນມະຫາປະໂລຫິດແຕ່ຄຳສາບານທີ່ພຣະເຈົ້າໄດ້ກ່າວໄວ້ນັ້ນ ຊຶ່ງມາພາຍຫລັງ
ລະບົບກົດບັນຍັດ ກໍໄດ້ແຕ່ງຕັ້ງ ພຣະບຸດ ແມ່ນຜູ້ຊຶ່ງຮັບການດີພ້ອມສົມບູນແບບ
ຢູ່ຕະຫລອດໄປເປັນນິດ

## ເຮັບເຣີ ບົດທີ 8

8:1 ຄື ເລື່ອງທີ່ເວົ້າມານີ້ ສະຫລຸບແລ້ວ ບັນຫາສຳຄັນວ່າ ເຮົາມີມະຫາປະໂລຫິດທີ່
ໄດ້ນັ່ງຢູ່ທາງຂວາພຣະທີ່ນັ່ງຂອງພຣະເຈົ້າ ຜູ້ເພິ່ນປະກອບດ້ວຍເດຊານຸພາບເທິງ
ຟ້າສະຫວັນ

8:2 ຊຶ່ງເພິ່ນໄດ້ປະຕິບັດໜ້າທີ່ໃນສະຖານສັກສິດບໍລິສຸດ ກັບໃນວິຫານອັນແທ້ຈິງຢູ່
ເທິງສະຫວັນ ທີ່ອົງພຣະຜູ້ເປັນເຈົ້າໄດ້ຕັ້ງຂຶ້ນໄວ້ ບໍ່ແມ່ນມະນຸດຕັ້ງ
8:3 ຍ້ອນວ່າ ມະຫາປະໂລຫິດທູ່ຄົນໄດ້ຮັບການແຕ່ງຕັ້ງ ເພື່ອຖວາຍຂອງຝາກ
ຂອງຕ້ອນ ກັບຖວາຍເຄື່ອງບູຊາລົບລ້າງບາບ ຍ້ອນເຫດນີ້ເນາະ ຈຳເປັນແລ້ວທີ່
ມະຫາປະໂລຫິດທີ່ເວົ້າມານີ້ ຕ້ອງມີແນວໜຶ່ງແນວໃດທີ່ຊິຖວາຍ
8:4 ຄື ຄັ່ນເພິ່ນຢູ່ໃນໂລກນີ້ ເພິ່ນບໍ່ຈຳເປັນທີ່ຊິຕ້ອງເປັນປະໂລຫິດກໍໄດ້ ຍ້ອນວ່າ
ມີປະໂລຫິດຫລາຍຄົນ ທີ່ນຳຖວາຍຂອງຝາກຂອງຕ້ອນຢູ່ແລ້ວ ຕາມທີ່ກົດບັນຍັດ
ບົ່ງບອກໄວ້
8:5 ການປະຕິບັດຂອງພວກນີ້ ເປັນແຕ່ພາບຈຳລອງ ເປັນເງົາຂອງຄວາມເປັນຈິງຢູ່
ເທິງສະຫວັນ ຄືກັນກັບທີ່ພຣະເຈົ້າໄດ້ສັ່ງເຖົ້າ ໂມເຊ ໄວ້ ບັດຍາມ ລາວ ຊິລົງມື
ສ້າງວິຫານເຄື່ອນທີ່ນັ້ນ ພຣະເຈົ້າບອກ ລາວ ວ່າ *"ເບິ່ງໃຫ້ດີເດີ້ ໃຫ້ເຮັດທູ່ອັນທູ່
ແນວເປັນຕາມແບບຢ່າງທີ່ເຮົາໃຫ້ເຈົ້າເບິ່ງຕອນຢູ່ເທິງພູເຂົານັ້ນ"*
8:6 ແຕ່ບັດນີ້ ຜູ້ນີ້ໄດ້ຕຳແໜ່ງໜ້າທີ່ເລີດກວ່າ ຄືເພິ່ນເປັນຄົນກາງແຫ່ງພັນທະສັນ-
ຍາທີ່ປະເສີດກວ່າ ຊຶ່ງໄດ້ຮັບການແຕ່ງຕັ້ງເທິງຄຳໝັ້ນສັນຍາທີ່ດີກວ່າເປັນຮາກ-
ຖານ
8:7 ຄື ຄັ່ນພັນທະສັນຍາເດີມນັ້ນຖືກຕ້ອງບໍ່ມີຕຳນີ້ແລ້ວ ກໍບໍ່ຈຳເປັນທີ່ຊິຕ້ອງໃຫ້ມີ
ພັນທະສັນຍາໃໝ່ອີກ
8:8 ຍ້ອນວ່າ ພຣະເຈົ້າໄດ້ຕິພວກຊາວເຮັບເຣີວ່າ "ນີ້ແຫລະ ອົງພຣະຜູ້ເປັນເຈົ້າໄດ້
ເວົ້າວ່າ ຊິມີມື້ໜຶ່ງມາທາງໜ້າ ທີ່ເຮົາຊິເຮັດພັນທະສັນຍາໃໝ່ໄວ້ກັບຊົນຊາດ *ອິ-
ສະຣາເອນ* ກັບຊົນຊາດ *ຢູດາ* ນຳ
8:9 ຊຶ່ງບໍ່ແມ່ນຕາມພັນທະສັນຍາເດີມນັ້ນທີ່ເຮົາໄດ້ເຮັດໄວ້ກັບປູ່ຍ່າຕາຍາຍຂອງ
ເຂົາ ໃນມື້ທີ່ເຮົາໄດ້ຈູງມືເຂົາ ນຳພາເຂົາອອກຈາກການເປັນຂ້າທາດໃນດິນແດນ
*ເອຢິບ* ຍ້ອນວ່າເຂົາບໍ່ໄດ້ດຳເນີນຕາມພັນທະສັນຍາຂອງເຮົາ ເຮົາຈັ່ງປະປ່ອຍ
ເຂົາໄວ້
8:10 ນີ້ຄືພັນທະສັນຍາໃໝ່ທີ່ເຮົາຊິເຮັດໄວ້ນຳຊົນຊາດ *ອິສະຣາເອນ* ຫລັງຈາກ
ຍາມມື້ນັ້ນ ອົງພຣະຜູ້ເປັນເຈົ້າໄດ້ເວົ້າໄວ້ອີກວ່າ ເຮົາຊິໃສ່ກົດບັນຍັດຂອງເຮົາໄວ້

ໃນຄວາມຄຶດຂອງເຂົາ ກັບຊິຈາລຶກໄວ້ໃນຈິດໃຈຂອງເຂົານຳ ກັບວ່າ ເຮົາຊິເປັນ
ພຣະເຈົ້າຂອງເຂົາ ແລ້ວເຂົາຊິເປັນຊົນຊາດຂອງເຮົາ
8:11 ແລ້ວບໍ່ມີໃຜໃນພວກເຂົາຊິຕ້ອງບອກສອນໄທບ້ານໄທເມືອງ ຫລືບອກສອນ
ພີ່ໆນ້ອງໆ ຂອງໂຕເອງວ່າ 'ໃຫ້ຮູ້ຈັກກັບພຣະເຈົ້າເດີ້' ຍ້ອນວ່າ ເຂົາຄູ່ຄົນຊິໄດ້ຮູ້-
ຈັກກັບເຮົາຢູ່ແລ້ວ ຕັ້ງແຕ່ຄົນຕໍ່າຕ້ອຍທີ່ສຸດຮອດຜູ້ເປັນໃຫຍ່ທີ່ສຸດ
8:12 ຍ້ອນວ່າເຮົາຊິສະແດງຄວາມເມດຕາກະລຸນາຕໍ່ຄວາມບໍ່ເປັນທຳຂອງເຂົາ
ແລ້ວຊິບໍ່ຈຳຄວາມຜິດບາບ ກັບການລະເມີດກົດບັນຍັດຂອງເຂົາອີກເລີຍ"
8:13 ແລ້ວທີ່ເພິ່ນໄດ້ເວົ້າວ່າ *"ເຮົາຊິເຮັດພັນທະສັນຍາໃໝ່"* ເພິ່ນໝາຍຄວາມວ່າ
ພັນທະສັນຍາເດີມມັນພວມຊິເກົ່າແກ່ລ່ວງສະໄໝໄປ ພ້ອມທີ່ຊິເສື່ອມສູນໄປແລ້ວ

## ເຮັບເຣີ ບົດທີ 9

9:1 ແທ້ຈິງແລ້ວ ແມ່ນແຕ່ພັນທະສັນຍາເດີມນັ້ນ ມັນກໍຍັງມີກົດລະບຽບຕ່າງໆ ໃນ
ພິທີການຮັບໃຊ້ຖວາຍພຣະເຈົ້າ ກັບມີສະຖານສັກສິດບໍລິສຸດຢູ່ທາງໂລກນີ້ນຳ
9:2 ໂດຍວ່າ ມີວິຫານເຄື່ອນທີ່ຊຶ່ງຕົກແຕ່ງຈັດກຽມໄວ້ແລ້ວ ບໍລິເວນນອກມີຄັນປະ-
ທີບ ມີໂຕະວາງຂອງ ກັບມີເຂົ້າຈີ່ຕັ້ງໄວ້ ບໍລິເວນນີ້ເອີ້ນວ່າ ສະຖານສັກສິດບໍລິສຸດ
9:3 ແລ້ວຢູ່ທາງຫລັງມ່ານຊັ້ນໃນ ເປັນສ່ວນຂອງວິຫານທີ່ເອີ້ນວ່າ ໝ້ອງສັກສິດບໍ-
ລິສຸດທີ່ສຸດ
9:4 ຊຶ່ງໃນບໍລິເວນນັ້ນ ມີແທ່ນບູຊາທອງຄຳ ເປັນທີ່ເຜົາຖວາຍເຄື່ອງຫອມບູຊາ ກັບ
ມີຫີບພັນທະສັນຍາທີ່ມີທອງຄຳເຄືອບໄວ້ຄູ່ດ້ານ ໃນຫີບນັ້ນໄດ້ມີໂຖທອງຄຳຊຶ່ງມີ
ມານາໃສ່ໄວ້ ກັບມີໄມ້ເທົ້າຂອງເຖົ້າ ອາໂຣນ ທີ່ງອກອອກຊໍ່ ກັບມີແຜ່ນຫີນສອງ
ແຜ່ນທີ່ມີພັນທະສັນຍານັ້ນຈາລຶກໄວ້
9:5 ແລ້ວຢູ່ເທິງຝາຫີບນັ້ນ ໄດ້ມີຮູບເທວາເຄຣຸບແຫ່ງສະຫງ່າລາສີສອງຮູບ ກາງ
ປົກຄຸມພຣະທີ່ນັ່ງກະລຸນາໄວ້ ເລື່ອງແນວໝູ່ນີ້ເຮົາຊິເວົ້າລາຍລະອຽດຍັງບໍ່ທັນໄດ້
9:6 ບັດຕອນຈັດກຽມແນວໝູ່ນີ້ໄວ້ຈັ່ງຊີ້ແລ້ວ ພວກປະໂລຫິດໄດ້ເຂົ້າບໍລິເວນນອກ
ຂອງວິຫານເຄື່ອນທີ່ ເພື່ອເຮັດພິທີການຮັບໃຊ້ຖວາຍຕ່າງໆ

9:7 ແຕ່ຝ່າຍບໍລິເວນຂ້າງໃນ ມະຫາປະໂລຫິດໄດ້ເຂົ້າໄປພຽງແຕ່ປີລະເທື່ອ ຈັ່ງນຳ
ເອົາເລືອດເຂົ້າໄປນຳ ຊຶ່ງເຂົາຕ້ອງຖວາຍເພື່ອຄວາມຜິດບາບຂອງໂຕເອງກ່ອນ
ແລ້ວຈັ່ງເພື່ອປະຊາຊົນ ສຳລັບການຜິດພາດທີ່ພວກເຂົາເຮັດໂດຍບໍ່ຮູ້ເນື້ອໂຕ
9:8 ບັດນີ້ ພຣະວິນຍານ ກໍຊີ້ແຈງວ່າ ລະບົບການເຂົ້າໄປໃນທີ່ສັກສິດບໍລິສຸດທີ່ສຸດ
ນັ້ນ ຍັງບໍ່ທັນຖືກເປີດເຜີຍຕອນວິຫານເຄື່ອນທີ່ອັນເດີມຍັງຕັ້ງໄວ້ຢູ່
9:9 ຄື ລະບົບເດີມນັ້ນ ເປັນແຕ່ພາບພົດເວົ້າເຖິງໂຕຈິງທີ່ເຫັນແລ້ວໃນສະໄໝນີ້ ຊຶ່ງ
ລະບົບເດີມໄດ້ມີການຖວາຍຂອງຝາກຂອງຕ້ອນ ກັບເຄື່ອງຖວາຍບູຊາຕ່າງໆ ຊຶ່ງ
ແນວໝູ່ນີ້ ບໍ່ສາມາດເຮັດໃຫ້ຈິດສຳນຶກຜິດຊອບເຖິງທີ່ດີພ້ອມຂອງຜູ້ຖວາຍນັ້ນ
ເລີຍ
9:10 ຊຶ່ງເປັນແຕ່ພຽງເລື່ອງຂອງກິນຂອງດື່ມ ກັບພິທີຊຳລະລາງຕ່າງໆ ກັບພິທີ
ການຕ່າງໆ ທີ່ໃຫ້ມີໄວ້ສຳລັບເນື້ອໜັງ ຈົນກວ່າຊິຮອດຍາມແກ້ໄຂລະບົບນັ້ນ
9:11 ແຕ່ວ່າ ພຣະຄຣິດ ໄດ້ມາເປັນມະຫາປະໂລຫິດຂອງແນວດີງາມທີ່ຊິມາໃນ
ພາຍໜ້າ ຊຶ່ງເປັນລະບົບຂອງວິຫານລະບົບໃໝ່ທີ່ຍິ່ງໃຫຍ່ປະເສີດກວ່າ ທີ່ບໍ່ໄດ້
ສ້າງດ້ວຍມື ຄືບໍ່ໄດ້ເປັນຝ່າຍການສ້າງທາງໂລກນີ້
9:12 ທີ່ບໍ່ໄດ້ອາໄສເລືອດແບ້ຫລືເລືອດງົວນ້ອຍ ແຕ່ເພິ່ນໄດ້ນຳເອົາພຣະໂລຫິດ
ຂອງເພິ່ນເອງ ເຂົ້າໄປໃນທີ່ສັກສິດບໍລິສຸດທີ່ສຸດໜ້ອງແທ້ຈິງພຽງເທື່ອດຽວເທົ່ານັ້ນ
ຈັ່ງມີຄວາມລອດພົ້ນຄຸ້ມໄວ້ຕະຫລອດໄປເປັນນິດ
9:13 ຄື ຄັນການສັ່ນເລືອດງົວໂຕຜູ້ ກັບເລືອດແບ້ ກັບຂີ້ເຖົ່າງົວນ້ອຍໂຕແມ່ ສາ-
ມາດເຮັດໃຫ້ໝົດມົນທິນເປັນຄົນບໍລິສຸດໄດ້
9:14 ແຮງຫລາຍກວ່ານັ້ນສໍ່າໃດ ພຣະໂລຫິດຂອງພຣະຄຣິດ ຜູ້ເພິ່ນໄດ້ຖວາຍເພິ່ນ
ເອງແດ່ພຣະເຈົ້າ ໂດຍບໍ່ມີແປ້ວຫລືຈຸດດ່າງເລີຍ ສາມາດຊຳລະລາງຈິດສຳນຶກ-
ຜິດຊອບຂອງພວກເຈົ້າ ໃຫ້ພົ້ນຈາກການເຮັດແນວອະນິຈັງ ເພື່ອຊິໄດ້ຮັບໃຊ້
ພຣະເຈົ້າ ຜູ້ດຳລົງຢູ່ຕະຫລອດໄປເປັນນິດ
9:15 ຍ້ອນເຫດນີ້ເນາະ ເພິ່ນຈັ່ງເປັນຄົນກາງຂອງພັນທະສັນຍາໃໝ່ ຍ້ອນການ
ຕາຍແທນຂອງເພິ່ນ ເພື່ອໄຖ່ຄົນເຮົາຜູ້ລະເມີດຕໍ່ພັນທະສັນຍາເດີມນັ້ນ ເພື່ອຄົນ

ທັງຫລາຍທີ່ໄດ້ຮັບການເອີ້ນການເຊີນນັ້ນ ຊິໄດ້ມີສ່ວນຮ່ວມໃນມໍລະດົກອັນອັນ-
ຕະຫລອດໄປເປັນນິດ ຕາມຄຳໝັ້ນສັນຍາ
9:16 ຄືວ່າ ໃນກໍລະນີທີ່ມີພິໄນກຳ ຜູ້ເຮັດພິໄນກຳໄວ້ ກໍຊິຕ້ອງຕາຍກ່ອນ ກວ່າຜູ້
ເປັນທາຍາດຊິມີສິດຮັບມໍລະດົກໄດ້
9:17 ໂດຍວ່າ ພິໄນກຳໃດໆ ບໍ່ມີສິດໃຊ້ໄດ້ ນອກຈາກຜູ້ທີ່ເຮັດຊິຕາຍກ່ອນ ຊຶ່ງພິ-
ໄນກຳນັ້ນໃຊ້ບໍ່ໄດ້ບັດຜູ້ເຮັດຍັງມີຊີວິດຢູ່
9:18 ຈັ່ງຊັ້ນ ແມ່ນແຕ່ພັນທະສັນຍາເດີມນັ້ນ ມັນຍັງບໍ່ສາມາດຖືກແຕ່ງຕັ້ງໄວ້ນອກ
ຈາກມີເລືອດ
9:19 ໂດຍວ່າ ບັດເຖົ້າ ໂມເຊ ໄດ້ບອກກົດລະບຽບໝົດຄູ່ຂໍ້ຂອງກົດບັນຍັດ ໃຫ້ຊົນ-
ຊາດ ອິສະຣາເອນ ຟັງ ລາວ ຈັ່ງໄດ້ເອົາເລືອດຂອງງົວນ້ອຍ ກັບເລືອດຂອງແບ້
ກັບນ້ຳ ກັບເອົາຂົນແກະສີແດງ ກັບຕົ້ນໃບຫູສົບ ມາສັ່ນໃສ່ໜັງສືມ້ວນນັ້ນ ແລ້ວ
ຈັ່ງສັ່ນໃສ່ຊົນຊາດ ອິສະຣາເອນ ທັງໝົດນຳ
9:20 ແລ້ວຈັ່ງເວົ້າວ່າ "ນີ້ຄືເລືອດຂອງພັນທະສັນຍາ ຊຶ່ງພຣະເຈົ້າໄດ້ສັ່ງໄວ້ກັບ
ພວກເຈົ້າ"
9:21 ແລ້ວໃນທຳນອງດຽວກັນ ລາວ ໄດ້ເອົາເລືອດ ສັ່ນໃສ່ວິຫານເຕື່ອນທີ່ ກັບ
ເຄື່ອງໃຊ້ຄູ່ຢ່າງທີ່ໃຊ້ໃນການປະຕິບັດຖວາຍພຣະເຈົ້ານຳ
9:22 ຄື ຕາມກົດບັນຍັດນັ້ນ ສາມາດຊຳລະລາງມົນທິນເກືອບໝົດຄູ່ແນວໄດ້ດ້ວຍ
ເລືອດ ແລ້ວນອກຈາກວ່າມີເລືອດໄຫລອອກ ຈັ່ງຊິມີການຍົກໂທດໃຫ້ອະໄພ
ບາບໄດ້
9:23 ຈັ່ງຊັ້ນ ຈຳເປັນຕ້ອງມີພາບຈຳລອງຢູ່ທາງໂລກນີ້ ເພື່ອເວົ້າເຖິງໂຕຈິງຢູ່ເທິງ
ສະຫວັນ ຊຶ່ງແນວຈຳລອງຢູ່ທາງນີ້ນັ້ນ ໄດ້ໃຊ້ *ເລືອດ* ແນວໝູ່ນີ້ ເປັນເຄື່ອງບູຊາ
ລົບລ້າງມົນທິນ ແຕ່ວ່າສ່ວນໂຕຈິງຢູ່ເທິງສະຫວັນ ໃຊ້ຂອງປະເສີດກວ່າເປັນ
ເຄື່ອງບູຊາລົບລ້າງມົນທິນໄດ້
9:24 ຄືວ່າ ພຣະຄຣິດ ບໍ່ໄດ້ນຳເອົາເຄື່ອງບູຊາເຂົ້າໄປໃນທີ່ສັກສິດບໍລິສຸດຢູ່ທາງ
ໂລກນີ້ ທີ່ສ້າງດ້ວຍມືມະນຸດ ອັນເປັນພາບຈຳລອງຊື່ໆ ທີ່ເວົ້າເຖິງຕົວຈິງ ແຕ່ເພິ່ນ

ໄດ້ນຳເອົາເຄື່ອງບູຊາເຂົ້າໄປເທິງສະຫວັນນັ້ນ ຖວາຍໂຕເອງຕໍ່ໜ້າພຣະເຈົ້າເພື່ອ
ຄົນເຮົາທັງຫລາຍ
9:25 ເພິ່ນບໍ່ຈຳເປັນທີ່ຊິຕ້ອງຖວາຍເພິ່ນເອງເປັນຫລາຍເທື່ອຫລາຍທີ ຄືກັນກັບ
ພວກມະຫາປະໂລຫິດຢູ່ທາງນີ້ ຕ້ອງນຳເອົາເລືອດ *ສັດ* ເຂົ້າໄປໃນທີ່ສັກສິດບໍລິ-
ສຸດທີ່ສຸດຊໍ້າແລ້ວຊໍ້າອີກ
9:26 ຄັນຈັ່ງຊັ້ນ ພຣະຄຣິດ ຄືຊິຕ້ອງທົນເອົາທຸກທໍລະມານຊໍ້າແລ້ວຊໍ້າອີກຕັ້ງແຕ່
ສ້າງໂລກມາ ແຕ່ວ່າບັດນີ້ ເພິ່ນໄດ້ມາປາກົດໃນຍາມສຸດທ້າຍຂອງຍຸກນີ້ ເພື່ອຊິ
ກຳຈັດຄວາມບາບໃຫ້ໄດ້ ໂດຍຖວາຍເພິ່ນເອງເປັນເຄື່ອງບູຊາພຽງເທື່ອດຽວ
9:27 ຄືມີການກຳນົດສຳລັບມະນຸດໄວ້ແລ້ວວ່າ ຊິຕ້ອງຕາຍເທື່ອດຽວ ແລ້ວຫລັງ
ຈາກນັ້ນກໍຊິຕ້ອງເຂົ້າສູ່ການພິພາກສາ
9:28 ຈັ່ງຊັ້ນ ໃນທຳນອງດຽວກັນ ພຣະຄຣິດ ໄດ້ຖວາຍເພິ່ນເອງໃນການຕາຍແທນ
ພຽງເທື່ອດຽວ ເພື່ອຊິຮັບແບກເອົາຄວາມຜິດບາບຂອງຄົນຫລວງຫລາຍ ແລ້ວ
ຝ່າຍຄົນທີ່ຄອຍຖ້າເພິ່ນ ເພິ່ນກໍຊິປາກົດເທື່ອທີ່ສອງ ບໍ່ແມ່ນເພື່ອບາບ ແຕ່ເພື່ອ
ຄວາມລອດພົ້ນ

## ເຮັບເຣີ ບົດທີ 10

10:1 ແຕ່ວ່າ ຝ່າຍລະບົບກົດບັນຍັດ *ເດີມ* ນັ້ນ ມັນເປັນພຽງເງົາຂອງລະບົບແນວ
ອັນດີງາມທີ່ຊິມາໃນພາຍໜ້າ ຈັ່ງຊັ້ນ ລະບົບເດີມທີ່ເປັນແຕ່ເງົາໂຕຈິງ ມີການ-
ຖວາຍບູຊາຄູ່ປີໆ ແຕ່ຍັງບໍ່ສາມາດເຮັດໃຫ້ຄົນເຮົາຜູ້ທີ່ເຂົາຖວາຍນັ້ນ ເຖິງຄວາມ
ດີພ້ອມສົມບູນແບບໄດ້
10:2 ຄັນມັນເປັນຈັ່ງຊັ້ນ ບໍ່ແມ່ນເຂົາຊິເຊົາເຮັດການຖວາຍເຄື່ອງບູຊາແຕ່ດົນນານ
ບໍ້ ຍ້ອນວ່າ ຄັນພວກຜູ້ນະມັດສະການນັ້ນໄດ້ຮັບການລົບລ້າງບາບໃຫ້ບໍລິສຸດ
ແລ້ວ ເຂົາກໍຊິບໍ່ໄດ້ຄຳນຶງເຖິງເລື່ອງບາບອີກຕໍ່ໄປ
10:3 ແຕ່ວ່າ ໃນການຖວາຍເຄື່ອງບູຊາຄູ່ປີໆ ໃນລະບົບເດີມນັ້ນ ມີການເຕືອນສະຕິ
ໃຫ້ໂຕເອງໃນເລື່ອງບາບໄວ້ຢູ່ສະເໝີ
10:4 ຍ້ອນວ່າເລືອດຂອງງົວໂຕຜູ້ກັບເລືອດຂອງແບ້ນັ້ນ ກໍບໍ່ສາມາດລົບລ້າງບາບ
ໃຫ້ອອກໄປໄດ້

10:5 ຈັ່ງຊັ້ນ ບັດ ພຣະຄຣິດ ໄດ້ເຂົ້າມາໃນໂລກແລ້ວ ເພິ່ນໄດ້ເວົ້າວ່າ "ການຖວາຍ
ເຄື່ອງບູຊາກັບການຖວາຍແນວອື່ນໆ ຊໍ້າແລ້ວຊໍ້າອີກ ພຣະອົງບໍ່ຕ້ອງການເລີຍ
ແຕ່ພຣະອົງໄດ້ຈັດກຽມຮ່າງກາຍນີ້ໄວ້ສໍາລັບຜູ້ຂ້າ
10:6 ຄືເຄື່ອງເຜົາບູຊາກັບເຄື່ອງບູຊາລົບລ້າງບາບນັ້ນ ພຣະອົງບໍ່ມີຄວາມຄວນພໍ-
ໃຈນໍາ
10:7 ແລ້ວເພິ່ນໄດ້ເວົ້າວ່າ 'ນີ້ແຫລະ ຜູ້ຂ້າໄດ້ມາເພື່ອຊິເຮັດຕາມພຣະປະສົງອັນ
ເປັນທີ່ຄວນພໍໃຈຂອງພຣະອົງເຈົ້າ ຕາມທີ່ *ພຣະຄໍາ* ຂຽນໄວ້ ຊຶ່ງເວົ້າເຖິງຜູ້ຂ້າ
ນັ້ນ'"
10:8 ຕາມທີ່ເພິ່ນໄດ້ເວົ້າໄວ້ກ່ອນວ່າ "ເຄື່ອງຖວາຍບູຊາກັບເຄື່ອງຖວາຍອື່ນໆ
ພ້ອມທັງເຄື່ອງເຜົາບູຊາ ກັບເຄື່ອງບູຊາລົບລ້າງບາບແນວໝູ່ນັ້ນ ພຣະອົງບໍ່ຕ້ອງ-
ການ ແລ້ວບໍ່ມີຄວາມຄວນພໍໃຈນໍາ" (ຊຶ່ງແນວໝູ່ນີ້ໄດ້ບູຊາຕາມລະບຽບການ
ຂອງກົດບັນຍັດນັ້ນ)
10:9 ແລ້ວເພິ່ນເວົ້າຕໍ່ອີກວ່າ "ນີ້ແຫລະ ພຣະເຈົ້າ ເອີຍ ຜູ້ຂ້າມາແລ້ວພຣະອົງເຈົ້າ
ເພື່ອຊິເຮັດຕາມພຣະປະສົງອັນເປັນທີ່ຄວນພໍໃຈຂອງພຣະອົງ" ຄືພຣະເຈົ້າຍົກ
ເລີກລະບົບເດີມນັ້ນ ເພື່ອຊິຕັ້ງລະບົບໃໝ່ຂຶ້ນແທນ
10:10 ແລ້ວໂດຍລະບົບໃໝ່ນັ້ນເອງ ເຮົາທັງຫລາຍຈັ່ງໄດ້ຮັບການລົບລ້າງບາບ
ໃຫ້ເປັນຜູ້ບໍລິສຸດໃນສາຍຕາຂອງພຣະເຈົ້າໄດ້ແລ້ວ ໂດຍການຖວາຍພຣະກາຍ-
ຂອງພຣະເຢຊູຄຣິດພຽງເທື່ອດຽວ ເພື່ອຜູ້ຄົນທັງຫລາຍ
10:11 ຝ່າຍພວກປະໂລຫິດຄູ່ຄົນນັ້ນ ເຂົາໄດ້ຢືນປະຕິບັດໜ້າທີ່ຢູ່ຄູ່ມື້ໆ ນໍາເອົາ
ເຄື່ອງບູຊາຢ່າງດຽວກັນນັ້ນມາຖວາຍແລ້ວຖວາຍອີກ ຊຶ່ງເຄື່ອງບູຊານັ້ນບໍ່ສາມາດ
ຍົກຄວາມຜິດບາບໃຫ້ໄດ້ເລີຍ
10:12 ແຕ່ຝ່າຍຜູ້ນີ້ ບັດເພິ່ນຖວາຍເຄື່ອງບູຊາລົບລ້າງຄວາມບາບພຽງເທື່ອດຽວ
ເພື່ອຕະຫລອດໄປເປັນນິດໄດ້ແລ້ວ ເພິ່ນຈັ່ງຂຶ້ນໄປປະທັບຢູ່ທາງຂວາຂອງພຣະ-
ເຈົ້າ
10:13 ຕັ້ງແຕ່ນັ້ນມາ ເພິ່ນຄອຍຖ້າຢູ່ຈົນກວ່າພວກສັດຕູຂອງເພິ່ນຊິຖືກປາບລົງເປັນ
ມ້າພັກຕີນຂອງເພິ່ນ

10:14 ຍ້ອນວ່າ ໂດຍການຖວາຍບູຊາເທື່ອດຽວນັ້ນ ເພິ່ນໄດ້ເຮັດໃຫ້ຄົນທັງຫລາຍ
ທີ່ຮັບການລົບລ້າງບາບນັ້ນ ໃຫ້ເປັນຜູ້ບໍລິສຸດດີພ້ອມຕະຫລອດໄປເປັນນິດ
10:15 ແລ້ວ ພຣະວິນຍານ ເປັນພະຍານໃຫ້ຄົນເຮົາ ຄືກັນກັບທີ່ເພິ່ນເຄີຍເວົ້າມາ
ກ່ອນວ່າ
10:16 “ນີ້ຄືພັນທະສັນຍາຊຶ່ງເຮົາຊິເຮັດກັບເຂົາທັງຫລາຍຫລັງຈາກສະໄໝນັ້ນ
ເຮົາຊິໃສ່ກົດບັນຍັດຂອງເຮົາໄວ້ໃນຄວາມຄຶດຂອງເຂົາ ກັບຊິຈາລຶກໄວ້ໃນຈິດໃຈ
ຂອງເຂົານຳ”
10:17 ແລ້ວເພິ່ນກໍເວົ້າເຕີມອີກວ່າ “ເຮົາຊິບໍ່ຈຳຄວາມຜິດບາບຂອງເຂົາກັບການ
ຝ່າຝືນກົດບັນຍັດຂອງເຂົາໄວ້ອີກເລີຍ”
10:18 ບັດນີ້ການລົບລ້າງບາບອະໄພໂທດຮຽບຮ້ອຍແລ້ວ ບໍ່ຕ້ອງມີການຖວາຍ
ເຄື່ອງບູຊາຍ້ອນບາບອີກຕໍ່ໄປ
10:19 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ບັດນີ້ເຮົາມີສິດທີ່ຊິເຂົ້າໄປໃນສະຖານສັກສິດ
ບໍລິສຸດທີ່ສຸດ ໄດ້ດ້ວຍຄວາມກ້າຫານ ໂດຍທາງພຣະໂລຫິດຂອງພຣະເຢຊູ
10:20 ອັນນີ້ກໍເປັນທາງໃໝ່ຂອງເພິ່ນ ເປັນທາງທີ່ໃຫ້ມີຊີວິດຊຶ່ງເພິ່ນໄດ້ເຮັດໄວ້ໃຫ້
ພວກເຮົາຜ່ານມ່ານເຂົ້າໄປໄດ້ ແລ້ວມ່ານນັ້ນກໍຄືຮ່າງກາຍຂອງເພິ່ນ
10:21 ຄືບັດເຮົາມີມະຫາປະໂລຫິດອັນໃຫຍ່ຫລວງທີ່ປົກຄອງເຮືອນຂອງພຣະເຈົ້າ
ແລ້ວ
10:22 ກໍໃຫ້ຄົນເຮົາທັງຫລາຍເຂົ້າມາໃກ້ຊິດກັບເພິ່ນດ້ວຍໃຈຈິງ ດ້ວຍຄວາມເຊື່ອ-
ໝັ້ນຢ່າງເຕັມປ່ຽມ ໂດຍມີໃຈທີ່ໄດ້ຮັບການໂຜດໃຫ້ບໍລິສຸດ ຈາກຈິດສຳນຶກຜິດ-
ຊອບອັນຊົ່ວຊ້າເລວຊາມ ກັບມີກາຍທີ່ໄດ້ຮັບການຊຳລະລາງໃຫ້ສະອາດງາມ
ດ້ວຍນ້ຳບໍລິສຸດນຳ
10:23 ຈັ່ງຂໍໃຫ້ເຮົາຍຶດໝັ່ນໃນຄວາມຫວັງອັນໝັ້ນຄົງ ທີ່ເຮົາໄດ້ຮັບປາກໄວ້ນັ້ນ
ໂດຍບໍ່ຫວັ່ນໄຫວ ໂດຍວ່າເພິ່ນຜູ້ທີ່ສັນຍານັ້ນຊື່ສັດວາງໃຈໄດ້ເລີຍ
10:24 ແລ້ວຂໍໃຫ້ພວກເຮົາພິຈາລະນາຕໍ່ກັນແລະກັນ ເພື່ອຊັກຊວນໃຫ້ເກີດມີຄວາມ
ຮັກແພງກັບຄວາມດີຕໍ່ກັນແລະກັນ

10:25 ແລ້ວຢ່າລະເລີຍຕໍ່ການຕຸ້ມໂຮມກັນຂອງພວກເຮົາຄືກັນກັບຜູ້ລາງຄົນ ແຕ່
ຄວນຊິເຕືອນສະຕິໃຫ້ກຳລັງໃຈຕໍ່ກັນແລະກັນ ເປັນຫລາຍຂຶ້ນໆ ບັດເຫັນວ່າ ມື້
ນັ້ນແຮງໃກ້ຊິເຂົ້າມາຮອດແລ້ວ
10:26 ຄື ຄັນພວກເຮົາຍັງຂືນໄປເຮັດຜິດບາບອີກຫລັງຈາກທີ່ເຮົາໄດ້ຮັບຮູ້ເລື່ອງ
ຄວາມຈິງແລ້ວ ມັນກໍຊິບໍ່ມີເຄື່ອງຖວາຍບູຊາອື່ນໆ ອີກຕໍ່ໄປໃຫ້ລົບລ້າງບາບໄດ້
10:27 ມີແຕ່ການພິພາກສາລົງໂທດເປັນຕາຢ້ານອັນໃຫຍ່ຫລວງຄອຍຖ້າຢູ່ ກັບມີ
ໄຟອັນຮ້າຍແຮງທີ່ຊິກືນກິນພວກຝ່າຍປະຕິປັກນັ້ນ
10:28 ຄື ຜູ້ໃດກໍຕາມທີ່ຝ່າຝືນດູໝິ່ນກົດບັນຍັດຂອງເຖົ້າ ໂມເຊ ນັ້ນ ຜູ້ນັ້ນກໍຕ້ອງ
ຕາຍໂດຍບໍ່ມີຄວາມເມດຕາເລີຍ ຕາມຄຳພະຍານຈາກສອງຫລືສາມປາກ
10:29 ແຕ່ແຮງຫລາຍກວ່ານັ້ນອີກ ສຳລັບຜູ້ທີ່ຢຽບຢ່ຳ ພຣະບຸດ ຂອງພຣະເຈົ້າ ກັບ
ດູໝິ່ນພຣະໂລຫິດແຫ່ງພັນທະສັນຍາໃໝ່ນັ້ນ ສົມຄວນຊິເປັນໂທດອີກຫລາຍສໍ່າ
ໃດ ຊຶ່ງການມີໂອກາດເປັນຜູ້ບໍລິສຸດໄດ້ນັ້ນ ເຂົາວ່າເປັນຂອງທຳມະດາສາມັນ
ກັບໄດ້ດູຖູກເວົ້າສົບປະໝາດວິນຍານແຫ່ງພຣະກະລຸນາທິຄຸນນຳ
10:30 ຄື ຄົນເຮົາຮູ້ຈັກກັບເພິ່ນຜູ້ທີ່ໄດ້ເວົ້າວ່າ *“ການແກ້ແຄ້ນລົງໂທດເປັນສິດຂອງ
ເຮົາ ເຮົາຊິຕອບສະໜອງເອົາເອງເດີ້”* ຄືອົງພຣະຜູ້ເປັນເຈົ້າໄດ້ເວົ້າແນວນັ້ນ
ແລ້ວໄດ້ເວົ້າອີກວ່າ *“ອົງພຣະຜູ້ເປັນເຈົ້າຊິຕັດສິນຕິສອນຄົນຂອງເພິ່ນ”*
10:31 ຄື ມັນເປັນຕາຢ້ານອີຫລີທີ່ຊິຕົກຢູ່ໃນຝ່າມືຂອງພຣະເຈົ້າ ຜູ້ດຳລົງຢູ່ຫັ້ນ
10:32 ແຕ່ໃຫ້ພວກເຈົ້າຄຶດເຫັນບັດຄາວກ່ອນນັ້ນເດີ້ ຄືຫລັງຈາກພວກເຈົ້າໄດ້ຮັບ
ຄວາມສະຫວ່າງແລ້ວ ພວກເຈົ້າໄດ້ອົດທົນຕໍ່ສູ້ຄວາມຍາກລຳບາກກັບຄວາມທຸກ-
ທໍລະມານຢ່າງໃຫຍ່ຫລວງ
10:33 ລາງເທື່ອພວກເຈົ້າເຄີຍຖືກປະຈານໃຫ້ອັບອາຍຂາຍໜ້າກັບຖືກຂົ່ມເຫງ
ແລ້ວອີກລາງເທື່ອພວກເຈົ້າກໍໄດ້ມີຫຸ້ນສ່ວນຮ່ວມທຸກກັບຄົນທີ່ຖືກຂົ່ມເຫງນັ້ນ
10:34 ແລ້ວພວກເຈົ້າເຄີຍມີໃຈເມດຕາສົງສານຕອນຂ້ອຍຖືກລ່າມໂສ້ຂັງໄວ້ນັ້ນ
ກັບໄດ້ຍອມດ້ວຍຄວາມຍິນດີບັດຖືກປຸ້ນເອົາຊັບສິນຂອງໂຕອອກໄປ ໂດຍຮູ້ກັນ
ວ່າ ພວກເຈົ້າມີຊັບສົມບັດອັນຖາວອນທີ່ປະເສີດກວ່າຢູ່ເທິງສະຫວັນ

10:35 ຈັ່ງຊັ້ນ ຢ່າປະຖິ້ມຄວາມໝັ້ນໃຈຂອງພວກເຈົ້າ ທີ່ຊິໄດ້ຮັບບຳເໜັດລາງວັນ
ອັນໃຫຍ່ຍິ່ງ
10:36 ຄື ພວກເຈົ້າຕ້ອງເພີ່ມຄວາມພາກພຽນອົດທົນ ເພື່ອບັດພວກເຈົ້າໄດ້ເຮັດ
ຕາມພຣະປະສົງຂອງພຣະເຈົ້າແລ້ວ ກໍຊິໄດ້ຮັບຕາມຄຳໝັ້ນສັນຍາທີ່ວ່າ
10:37 "ອີກບໍ່ດົນນານ ເພິ່ນຜູ້ທີ່ຊິມານັ້ນກໍຊິໄດ້ມາອີຫລີແລ້ວ ໂດຍຊິບໍ່ລ່າຊ້າ
10:38 ຄື ຄົນຊອບທຳຊິດຳເນີນຊີວິດຢູ່ດ້ວຍຄວາມເຊື່ອ ແລ້ວຄັ່ນຜູ້ໃດເສື່ອມຖອຍ
ໃຈຂອງເຮົາຊິບໍ່ຄວນພໍໃຈໃນຜູ້ນັ້ນເລີຍ"
10:39 ແຕ່ວ່າ ພວກເຮົາບໍ່ໄດ້ຢູ່ຝ່າຍຄົນໝູ່ນັ້ນ ທີ່ເສື່ອມຖອຍໄປສູ່ຄວາມພິນາດ ແຕ່
ຢູ່ຝ່າຍໝູ່ຄົນທີ່ຮັບເຊື່ອ ເຖິງວິນຍານຈິດເຂົາຊິໄດ້ລອດພົ້ນ

## ເຮັບເຣີ ບົດທີ 11

11:1 ບັດນີ້ ຄວາມເຊື່ອເປັນແກ່ນສານຂອງສິ່ງທີ່ຫວັງໄວ້ ເປັນຫຼັກຖານຢືນຢັນໄວ້
ໃນແນວທີ່ຕາຍັງບໍ່ທັນເຫັນ
11:2 ຄື ໂດຍຄວາມເຊື່ອໄວ້ວາງໃຈນີ້ເອງ ຊີວິດຂອງພວກຜູ້ຫລັກຜູ້ໃຫຍ່ໃນສະໄໝ
ກ່ອນໄດ້ເປັນທີ່ຍອມຮັບ
11:3 ໂດຍຄວາມເຊື່ອພວກເຮົາເຂົ້າໃຈວ່າ ຈັກກະວານທັງຫລາຍໄດ້ຮັບການສ້າງ
ຂຶ້ນມາດ້ວຍຖ້ອຍຄຳຂອງພຣະເຈົ້າ ຈັ່ງຊັ້ນ ແນວທີ່ຫລຽວເຫັນນີ້ ເພິ່ນບໍ່ໄດ້ບັນ-
ດານເອົາຈາກແນວທີ່ຕາເຫັນ
11:4 ໂດຍຄວາມເຊື່ອ ເຖົ້າ ອາເບນ ຈັ່ງໄດ້ເອົາເຄື່ອງບູຊາອັນປະເສີດກວ່າຂອງ
ເຖົ້າ ກາອິນ ມາຖວາຍພຣະເຈົ້າ ຊຶ່ງເປັນທີ່ຍອມຮັບຕໍ່ພຣະເຈົ້າວ່າ ລາວ ເປັນຜູ້
ຊອບທຳແລ້ວຍ້ອນເຄື່ອງບູຊາຂອງ ລາວ ແລ້ວແມ່ນແຕ່ ລາວ ຕາຍໄປກໍຍັງເປັນ
ພະຍານຢູ່
11:5 ໂດຍຄວາມເຊື່ອ ເຖົ້າ ເອໂນກ ຈັ່ງຖືກພຣະເຈົ້າຮັບຂຶ້ນໄປ ເພື່ອ ລາວ ຊິບໍ່ຕ້ອງ
ພົ້ກັບຄວາມຕາຍ ຊຶ່ງບໍ່ມີໃຜໄດ້ຮັບໄດ້ເຫັນ ລາວ ຕໍ່ໄປອີກ ຍ້ອນວ່າພຣະເຈົ້າໄດ້-
ຮັບ ລາວ ໄປ ຄືກ່ອນທີ່ ລາວ ຖືກຮັບຂຶ້ນໄປຫັ້ນ ຊີວິດ ລາວ ໄດ້ເປັນພະຍານວ່າ
ລາວ ເປັນທີ່ຄວນພໍໃຈຂອງພຣະເຈົ້າ

11:6 ແຕ່ວ່າ ຄັນບໍ່ມີຄວາມເຊື່ອ ມັນຊິບໍ່ສາມາດເປັນທີ່ຄວນພໍໃຈຂອງພຣະເຈົ້າໄດ້
ເລີຍ ຍ້ອນວ່າຜູ້ທີ່ຊິມາຫາພຣະເຈົ້ານັ້ນຕ້ອງເຊື່ອວ່າເພິ່ນດຳລົງຢູ່ຈິງ ກັບເຊື່ອວ່າ
ເພິ່ນເປັນຜູ້ໃຫ້ລາງວັນກັບຜູ້ຄົນ ທີ່ສະແຫວງຫາເພິ່ນດ້ວຍໃຈຈິງ
11:7 ໂດຍຄວາມເຊື່ອ ເຖົ້າ ໂນເອ ບັດຕອນພຣະເຈົ້າໄດ້ເປີດເຜີຍໃຫ້ ລາວ ຮູ້ເຖິງ
ເຫດການນ້ຳຊິທ່ວມໂລກ ທີ່ຍັງບໍ່ທັນໄດ້ເກີດຂຶ້ນນັ້ນ ລາວກໍຍັງລົງມືຕໍ່ເຮືອໃຫຍ່
ດ້ວຍໃຈເຄົາລົບພຣະເຈົ້າ ກຽມໄວ້ເພື່ອຊ່ອຍຊູຊີວິດເຮືອນຂອງ ລາວ ໃຫ້ລອດພົ້ນ
ໄດ້ ຊຶ່ງດ້ວຍຄວາມເຊື່ອນີ້ ລາວ ຈັ່ງຕັດສິນລົງໂທດໃສ່ຊາວໂລກ ຈັ່ງກາຍເປັນທາ-
ຍາດແຫ່ງຄວາມຊອບທຳ ຊຶ່ງເປັນມໍລະດົກຂອງຄວາມເຊື່ອ
11:8 ໂດຍຄວາມເຊື່ອ ເຖົ້າ ອັບຣາຮາມ ໄດ້ເຊື່ອຟັງ ຈັ່ງເຮັດຕາມຄຳສັ່ງຂອງພຣະ-
ເຈົ້າບັດເພິ່ນໄດ້ເອີ້ນ ລາວ ໃຫ້ອອກເດີນທາງໄປຍັງດິນແດນ ໝ້ອງທີ່ ລາວ ຊິຮັບ
ເປັນມໍລະດົກ ແລ້ວລາວກໍຕັ້ງຕົ້ນເດີນທາງອອກໄປໂດຍບໍ່ຮູ້ວ່າພວມຊິໄປທາງໃດ
11:9 ແລ້ວໂດຍຄວາມເຊື່ອ ລາວ ໄດ້ພັກອາໄສໃນດິນແດນທີ່ພຣະເຈົ້າໄດ້ສັນຍາ
ໄວ້ນັ້ນ ຢູ່ຄືກັນກັບຄົນຕ່າງບ້ານຕ່າງເມືອງ ອາໄສຢູ່ໃນເຕັນ ນຳກັນກັບ ອີຊາກ
ກັບ ຢາໂຄບ ຜູ້ເປັນລູກເປັນຫລານ ເປັນທາຍາດນຳກັນກັບ ລາວ ມີສິດໃນຄຳ-
ໝັ້ນສັນຍາອັນດຽວກັນເປັນມໍລະດົກ
11:10 ຄື ລາວ ໄດ້ຄອຍຖ້າເມືອງຊຶ່ງມີຮາກຖານອັນໝັ້ນຄົງ ທີ່ພຣະເຈົ້າເອງເປັນຜູ້
ອອກແບບກັບເປັນນາຍຊ່າງຜູ້ສ້າງນຳ
11:11 ໂດຍຄວາມເຊື່ອ ແມ່ເຖົ້າ ຊາຣາ ເອງ ໄດ້ຮັບແຮງກຳລັງ ເພື່ອຕັ້ງທ້ອງອອກ
ລູກບັດຍາມເຖົ້າຫລາຍແລ້ວ ຍ້ອນແມ່ເຖົ້າ ລາວ ເຊື່ອວ່າ ເພິ່ນຜູ້ໄດ້ສັນຍາໄວ້ນັ້ນ
ແມ່ນຜູ້ຊື່ສັດວາງໃຈໄດ້
11:12 ຈັ່ງຊັ້ນເນາະ ຈາກຜູ້ຊາຍຄົນໜຶ່ງທີ່ເຖົ້າຫລາຍຄືຊິຕາຍແລ້ວ ໄດ້ມີຄົນຫລວງ-
ຫລາຍເກີດມາ ຊຶ່ງຫລາຍຄືໝູ່ດາວຢູ່ເທິງຟ້າ ກັບຄືເມັດຊາຍຢູ່ຮິມຫາດທະເລ ຈົນ
ນັບບໍ່ໄດ້ເລີຍ
11:13 ຄົນໝູ່ນີ້ໄດ້ຕາຍໄປໃນຕອນທີ່ມີຄວາມເຊື່ອ ຊຶ່ງຍັງບໍ່ທັນໄດ້ຮັບຕາມທີ່ສັນຍາ
ໄວ້ນັ້ນ ແຕ່ໄດ້ເຫັນແຕ່ໄກ ເລີຍຍິນດີຮັບໄວ້ລ່ວງໜ້າດ້ວຍຄວາມໝັ້ນໃຈ ຈັ່ງ
ຍອມຮັບວ່າ ເປັນແຕ່ຄົນຕ່າງຖິ່ນ ຜູ້ສັນຈອນຢູ່ໃນໂລກນີ້

11:14 ຄື ຄົນທີ່ເວົ້າຈັ່ງຊີ້ ກໍສະແດງຢ່າງຊັດເຈນວ່າ ເຂົາພວມສະແຫວງຫາຖິ່ນທີ່
ເປັນບ້ານເມືອງຂອງໂຕເອງ
11:15 ແທ້ຈິງແລ້ວ ຄັນເຂົາຊິຮ່ຳຮອນຄຶດຮອດບ້ານເມືອງເກົ່າໜ້ອງທີ່ເຂົາຈາກມາ
ນັ້ນ ເຂົາຍັງມີໂອກາດທີ່ຊິຫລົບເມືອ
11:16 ແຕ່ວ່າບັດນີ້ ເຂົາປາດຖະໜາທີ່ຊິຢູ່ໃນເມືອງທີ່ປະເສີດກວ່ານັ້ນອີກ ຄືໃນ
ເມືອງສະຫວັນ ຈັ່ງຊັ້ນ ພຣະເຈົ້າບໍ່ໄດ້ລະອາຍ ບັດເຂົາເອີ້ນເພິ່ນວ່າເປັນພຣະເຈົ້າ
ຂອງເຂົາ ຍ້ອນເພິ່ນໄດ້ຈັດກຽມເມືອງໜຶ່ງໄວ້ໃຫ້ເຂົາຢູ່ແລ້ວ
11:17 ໂດຍຄວາມເຊື່ອ ເຖົ້າ ອັບຣາຮາມ ບັດພຣະເຈົ້າໄດ້ລອງໃຈ ລາວ ຍອມ
ຖວາຍ ອີຊາກ ໃຫ້ເປັນເຄື່ອງບູຊາ ຄືລູກຊາຍຜູ້ດຽວຂອງ ລາວ ຫລັງຈາກເພິ່ນ
ໄດ້ໃຫ້ຄຳໝັ້ນສັນຍາໄວ້ແລ້ວນັ້ນ
11:18 ຄືມີຖ້ອຍຄຳກ່າວວ່າ “*ເຊື້ອສາຍຂອງເຈົ້າຊິສືບທອດທາງ ອີຊາກ* ”
11:19 ສະຫລຸບແລ້ວ ເຖົ້າ ອັບຣາຮາມ ລາວ ເຊື່ອວ່າ ແມ່ນແຕ່ລູກ ລາວ ອາດ ຕາຍ
ໄປ ພຣະເຈົ້າກໍຍັງມີລິດສາມາດໃຫ້ເປັນຂຶ້ນມາຈາກຕາຍໄດ້ ຊຶ່ງປຽບວ່າ ລາວ
ໄດ້ຮັບລູກກັບຄືນມາຈາກຕາຍອີຫລີຕາມແບບຢ່າງ
11:20 ແລ້ວດ້ວຍຄວາມເຊື່ອ ເຖົ້າ ອີຊາກ ໄດ້ໃຫ້ພອນກັບ ຢາໂຄບ ກັບ ເອຊາວ
*ລູກຊາຍຂອງ ລາວ* ເຖິງແນວທີ່ຊິມີມາໃນພາຍໜ້ານັ້ນ
11:21 ແລ້ວໂດຍຄວາມເຊື່ອ ເຖົ້າ ຢາໂຄບ ບັດອາຍຸໃກ້ຊິຕາຍແລ້ວ ໄດ້ອວຍພອນ
ລູກຊາຍທັງສອງຂອງ ໂຢເຊບ ໃນຂະນະທີ່ ລາວ ຢືນນະມັດສະການພິງຫົວໄມ້-
ຄ້ຳເທົ້າຂອງ ລາວ
11:22 ແລ້ວໂດຍຄວາມເຊື່ອ ເຖົ້າ ໂຢເຊບ ບັດເຖິງຄາວຊິຕາຍແລ້ວ ໄດ້ເວົ້າເຖິງ
ການອອກເດີນທາງຂອງຊົນຊາດ ອິສະຣາເອນ ຈັ່ງໄດ້ໃຫ້ຄຳສັ່ງໄວ້ເຖິງດູກຂອງ
ລາວ
11:23 ແລ້ວໂດຍຄວາມເຊື່ອ ພໍ່ແມ່ຂອງເຖົ້າ ໂມເຊ ໄດ້ເຊື່ອງ ລາວ ໄວ້ຮອດສາມ
ເດືອນຕອນຍັງເປັນເດັກອ່ອນ ຍ້ອນເຂົາເຫັນວ່າ ລາວ ເປັນເດັກນ້ອຍງາມ ແລ້ວ
ເຂົາບໍ່ໄດ້ຢ້ານຄຳສັ່ງຂອງກະສັດນັ້ນ

11:24 ແລ້ວໂດຍຄວາມເຊື່ອ ບັດເຖົ້າ ໂມເຊ ໃຫຍ່ຂຶ້ນແລ້ວ ລາວກໍບໍ່ຍອມໃຫ້ເອີ້ນ
ລາວ ວ່າ ເປັນລູກຂອງລູກສາວກະສັດ ຟາຣາໂອ
11:25 ຄື ລາວ ເລືອກທີ່ຊິທົນເອົາຄວາມທຸກຍາກລຳບາກ ຮ່ວມກັບຊົນຊາດຄົນຂອງ
ພຣະເຈົ້າ ແທນທີ່ຊິຮວມກັນສຸມໃນການບາບທີ່ຊິຜ່ານພົ້ນໄປ
11:26 ລາວ ຈັ່ງຖືວ່າ ການຖືກດູໝິ່ນດູຖູກຂອງ ພຣະຄຣິດ ນັ້ນ ມີຄຸນຄ່າປະເສີດ
ກວ່າຄັງຊັບໃນປະເທດ ເອຢິບ ຍ້ອນວ່າ ຈຸດມຸ້ງໝາຍຂອງ ລາວ ຄືບຳເໜັດທີ່ດີກ-
ວ່ານັ້ນ
11:27 ແລ້ວໂດຍຄວາມເຊື່ອ ເຖົ້າ ໂມເຊ ໄດ້ ອົບພະຍົບ ອອກຈາກປະເທດ ເອຢິບ
ໂດຍບໍ່ຢ້ານຄວາມໂມໂຫຂອງກະສັດ ຍ້ອນ ລາວ ນຶກເຫັນພຣະເຈົ້າຜູ້ທີ່ຕາບໍ່ເຫັນ
11:28 ແລ້ວໂດຍຄວາມເຊື່ອ ລາວ ຈັ່ງໃຫ້ຖວາຍແກະນ້ອຍແຕ່ລະເຮືອນ ເອົາ
ເລືອດຂອງມັນໃສ່ວົງກົບປະຕູ ເພື່ອທູດເພັດຊະຄາດທີ່ຂ້າບຸດຫົວປີຊິບໍ່ມາແຕະ
ຕ້ອງພວກເຂົາ *ເອີ້ນວ່າ ປັດສະຄາ*
11:29 ແລ້ວໂດຍຄວາມເຊື່ອ ພວກຊົນຊາດ ອິສະຣາເອນ ນັ້ນ ໄດ້ຍ່າງໄປຕາມພື້ນ
ດິນແຫ້ງໃນຫ້ອງ ທະເລແດງ ຄືກັບຍ່າງຢູ່ເທິງບົກ ແຕ່ບັດພວກທະຫານ ເອຢິບ
ພະຍາຍາມໄລ່ຕາມກໍໄດ້ຈົມນ້ຳຕາຍ
11:30 ແລ້ວໂດຍຄວາມເຊື່ອ ກຳແພງເມືອງ ເຢຣິໂກ ໄດ້ພັງລົງ ຫລັງພວກເຂົາຍ່າງ
ອ້ອມຕະຫລອດເຈັດມື້
11:31 ແລ້ວໂດຍຄວາມເຊື່ອ ຍິງໂສເພນີ ຣາຫັບ ບໍ່ໄດ້ພິນາດໄປພ້ອມກັບພວກ
ຊາວເມືອງຜູ້ທີ່ບໍ່ໄດ້ເຊື່ອນັ້ນ ຍ້ອນນາງໄດ້ຕ້ອນຮັບຄົນສອດແນມນັ້ນໄວ້ດ້ວຍ
ຄວາມສະຫງົບສະຫງ່ຽມ
11:32 ແລ້ວຊິໃຫ້ຂ້ອຍເວົ້າອີຫຍັງອີກແໜ່ ຄືເວລາມັນບໍ່ພໍທີ່ຊິເວົ້າເຖິງນັກຮົບ ກິເດ-
ໂອນ ບາຣັກ ແຊມຊັນ ເຢັບທາ ກະສັດ ດາວິດ ກັບເຖົ້າ ຊາມູເອນ ພ້ອມກັບ
ພວກຜູ້ເປັນປາກເປັນສຽງທັງຫລາຍ
11:33 ຄື ໂດຍຄວາມເຊື່ອ ຄົນພວກນີ້ ໄດ້ເອົາຊະນະລາຊະອານາຈັກຕ່າງໆ ໄດ້
ເຮັດການໃນທາງຊອບທຳ ໄດ້ຮັບຄຳໝັ້ນສັນຍາ ກັບໄດ້ປິດປາກຂອງສິງໂຕ

11:34 ໄດ້ລອດພົ້ນຈາກແປວໄຟອັນຮ້າຍແຮງ ໄດ້ພົ້ນຈາກຄົມດາບສັດຕູ ຈາກ
ຄວາມອ່ອນແອມາເປັນຄົນກ້າຫານ ມີຄວາມອົງອາດໃນສະໜາມຮົບ ຈົ່ງສາມາດ
ໄລ່ກອງທັບຂອງຊາດອື່ນໆ ໃຫ້ແຕກໜີພ່າຍແພ້ໄປ
11:35 ພວກແມ່ຍິງໄດ້ຮັບຄົນຕາຍຂອງເຂົາໃຫ້ເປັນຂຶ້ນມາອີກ ຜູ້ລາງຄົນກໍຖືກທໍ-
ລະມານຢ່າງໜັກຮອດຕາຍ ຊຶ່ງເຂົາບໍ່ຍອມຮັບການປົດປ່ອຍ ຍ້ອນເຫັນແກ່ການ
ເປັນຂຶ້ນມາອັນປະເສີດກວ່າໃນພາຍໜ້າ
11:36 ຜູ້ລາງຄົນໄດ້ຖືກທົດລອງໂດຍຄໍາເຍາະເຍີ້ຍ ຖືກຂ້ຽນຕີ ກັບຖືກລ່າມໂສ້ເຖິງ
ຂັງຄຸກນໍາ
11:37 ຜູ້ລາງຄົນກໍຖືກເອົາກ້ອນຫີນແກວ່ງໃສ່ ລາງຄົນກໍຖືກເລື່ອຍໂຕເປັນທ່ອນໆ
ລາງຄົນຖືກທົດລອງຢ່າງແຮງ ລາງຄົນກໍຖືກຂ້າດ້ວຍຄົມດາບ ລາງຄົນກໍທ່ຽວ
ສັນຈອນໄປ ນຸ່ງແຕ່ໜັງແກະກັບໜັງແບ້ ອຶດຢາກປາກແຫ້ງ ທົນທຸກເວທະນາກັບ
ທົນການຂຸກຍູ້
11:38 (ຊຶ່ງໂລກນີ້ ມັນບໍ່ສົມຄວນ ດີພໍສໍາລັບຄົນແບບນີ້ເລີຍ) ເຂົາຈົ່ງຕ້ອງພະເນ-
ຈອນໄປໃນຖິ່ນແຫ້ງແລ້ງບໍ່ປ່ຽວ ຕາມພູເຂົາ ອາໄສຕາມຖໍ້າຕາມຖໍ້າ
11:39 ຄົນທັງຫລາຍທີ່ເຮົາເວົ້າມານີ້ ໄດ້ເປັນທີ່ຍອມຮັບຍ້ອນຄວາມເຊື່ອຂອງເຂົາ
ແຕ່ເຂົາກໍຍັງບໍ່ທັນໄດ້ຮັບຄໍາໝັ້ນສັນຍານັ້ນ
11:40 ຄືພຣະເຈົ້າໄດ້ຈັດກຽມແນວໜຶ່ງອັນປະເສີດກວ່ານັ້ນອີກໄວ້ແລ້ວເພື່ອຄົນເຮົາ
ເປັນແນວທີ່ພວກເຂົາຊິບໍ່ໄດ້ຮັບກ່ອນພວກເຮົາ ຄືການສູ່ສະພາບດີພ້ອມສົມບູນ
ແບບນັ້ນ

## ເຮັບເຣີ ບົດທີ 12

12:1 ຈົ່ງຊັ້ນ ບັດພວກເຮົາມີກຸ່ມພະຍານຫລວງຫລາຍທີ່ອ້ອມໄວ້ຈັ່ງຊີ້ແລ້ວ ໃຫ້ເຮົາ
ປົດອອກໝົດຄູ່ແນວທີ່ຖ່ວງໄວ້ ພ້ອມທັງການບາບທີ່ດຶງກ່ຽວເຮົາໄວ້ ແລ້ວໃຫ້
ພວກເຮົາແລ່ນແຂ່ງດ້ວຍຄວາມບາກບັ່ນ ມຸ້ງໄປສູ່ເສັ້ນໄຊຢູ່ທາງໜ້າ
12:2 ແລ້ວຈັບຕາໃສ່ ພຣະເຢຊູ ອົງປະລະບຽງຜູ້ລິເລີ່ມຄວາມເຊື່ອຂອງເຮົາ ກັບນໍາ
ໄປສູ່ທີ່ສໍາເລັດ ຊຶ່ງເພິ່ນໄດ້ຍອມທົນເອົາຕໍ່ຄວາມທຸກທໍລະມານໃນການຄຶງເທິງ

ໄມ້ກາງແຂນ ຖືວ່າການອັບອາຍອັນເປັນຕາລັງກຽດນັ້ນບໍ່ສຳຄັນເລີຍ ບັດແລ້ວ
ເພິ່ນໄດ້ຂຶ້ນໄປນັ່ງຢູ່ທາງຂວາພຣະທີ່ນັ່ງຂອງພຣະເຈົ້າ
12:3 ຈັ່ງຊັ່ນ ໃຫ້ພວກເຈົ້າຄຳນຶງເຖິງເພິ່ນ ຜູ້ໄດ້ທົນເອົາຕໍ່ການກຽດຊັງຊັງມຸ້ງຮ້າຍ
ຢ່າງຫລວງຫລາຍຂອງຄົນບາບຕໍ່ເພິ່ນ ບໍ່ຊັ່ນ ພວກເຈົ້າ ອາດ ຊິເກີດການເມື່ອຍ-
ລ້າທໍ້ແທ້ໃນໃຈ
12:4 ຄື ພວກເຈົ້າຍັງບໍ່ທັນພະຍາຍາມຕໍ່ຕ້ານຄວາມບາບ ຮອດເລືອດຕົກ
12:5 ແລ້ວພວກເຈົ້າໄດ້ລືມຖ້ອຍຄຳນັ້ນເນາະບໍ້ ທີ່ໄດ້ຕັກເຕືອນພວກເຈົ້າໃນຖານະ
ເປັນລູກໆ ວ່າ "ລູກເອີຍ ຢ່າລັງກຽດການຕັກເຕືອນຕີສອນຂອງອົງພຣະຜູ້ເປັນ-
ເຈົ້າເດີ້ ກັບຢ່າທໍ້ແທ້ໃຈບັດເພິ່ນຕຳນິວ່າກ່າວເຈົ້າເດີ້
12:6 ຍ້ອນວ່າ ອົງພຣະຜູ້ເປັນເຈົ້າຕັກເຕືອນຕີສອນຜູ້ທີ່ເພິ່ນຮັກແພງ ແລ້ວກໍຕີ
ສອນຄູ່ຄົນທີ່ເພິ່ນຮັບໄວ້"
12:7 ຄື ຄັ່ນພວກເຈົ້າທົນເອົາຕໍ່ການຕັກເຕືອນຕີສອນຂອງພຣະເຈົ້າໄດ້ ເພິ່ນຄືຊິ
ເຮັດນຳເຈົ້າຄືພໍ່ເຮັດນຳລູກ ຄືມີຢູ່ໃສທີ່ຜູ້ເປັນລູກຊິບໍ່ເຄີຍຖືກພໍ່ຕັກເຕືອນຕີສອນ
12:8 ແຕ່ຄັ່ນເຈົ້າບໍ່ເຄີຍຖືກຕັກເຕືອນຕີສອນ ຊຶ່ງຄູ່ຄົນເຄີຍໄດ້ຖືກຢູ່ແລ້ວ ເຈົ້າກໍບໍ່
ໄດ້ເປັນລູກແທ້ດອກ ແຕ່ເປັນລູກບໍ່ມີພໍ່
12:9 ອີກປະການໜຶ່ງ ຄົນເຮົາເຄີຍມີພໍ່ຕາມເນື້ອໜັງທີ່ຕັກເຕືອນຕີສອນເຮົາ ແລ້ວ
ເຮົາກໍຍັງໃຫ້ກຽດເຂົາ ແຮງຫລາຍກວ່ານັ້ນອີກ ເຮົາຄວນຊິໃຫ້ກຽດຢູ່ໃຕ້ການເບິ່ງ-
ແຍງຂອງພຣະເຈົ້າ ຜູ້ເປັນພໍ່ຂອງວິນຍານຈິດທັງຫລາຍ ຈັ່ງຊິໄດ້ຊີວິດ ບໍ່ແມ່ນບໍ້
12:10 ແທ້ຈິງແລ້ວ ພໍ່ຝ່າຍເນື້ອໜັງນັ້ນເຄີຍຕັກເຕືອນຕີສອນເຮົາຊົ່ວລະຍະໜຶ່ງ
ຕາມຄວາມເຫັນດີເຫັນງາມຂອງເຂົາ ແຕ່ພຣະເຈົ້າໄດ້ເຮັດເພື່ອຜົນປະໂຫຍດ
ຂອງເຮົາ ເພື່ອເຮົາຊິໄດ້ເຂົ້າມີສ່ວນຮ່ວມໃນຄວາມບໍລິສຸດຂອງເພິ່ນ
12:11 ບັດນີ້ ບໍ່ເຄີຍມີການຕັກເຕືອນຕີສອນທີ່ເປັນຕາຊົມຊື່ນຍິນດີເລີຍ ແຕ່ມັນ
ເປັນຕາເຈັບ ຈັ່ງໃດກໍຕາມ ບັດຜ່ານພົ້ນໄປແລ້ວ ມັນກໍເກີດຄວາມຊອບທຳ ເປັນ
ຜົນສຸກສຸກສະບາຍໃນຊີວິດຂອງຜູ້ທີ່ຮັບການອົບຮົມນັ້ນ
12:12 ຈັ່ງຊັ້ນ ໃຫ້ເສີມກຳລັງແຂນທີ່ອ່ອນແຮງຫ້ອຍລົງມາ ກັບຫົວເຂົ່າທີ່ເມື່ອຍລ້າ
ໃຫ້ແຂງແຮງຂຶ້ນເດີ້

12:13 ແລ້ວໃຫ້ເຮັດຫົນທາງໃຫ້ມັນຮາບມັນຊື່ເດີ້ ເພື່ອຜູ້ທີ່ຍ່າງຂາເຄຊິບໍ່ໄດ້ເກີດຂາ
ຜີກເຄັດກວ່າເກົ່າ ແຕ່ໃຫ້ຍ່າງສະດວກເພື່ອເຂົາຊິເຊົາເປັນດີ
12:14 ແລ້ວໃຫ້ພະຍາຍາມຢູ່ຢ່າງສະຫງົບສຸກກັບໝົດຄູ່ຄົນເດີ້ ແລ້ວໃຫ້ມີໃຈບໍລິສຸດ
ຄັ້ນບໍ່ບໍລິສຸດຊິບໍ່ມີໃຜໄດ້ເຫັນອົງພຣະຜູ້ເປັນເຈົ້າເລີຍ
12:15 ຈັ່ງເບິ່ງແຍງດີໆ ເພື່ອມີຜູ້ໜຶ່ງຜູ້ໃດຊິບໍ່ໄດ້ພາດຈາກພຣະກະລຸນາທິຄຸນຂອງ
ພຣະເຈົ້າ ຢ້ານວ່າ ອາດ ມີການຂົມຂື່ນເກີດຂຶ້ນມາເຮັດໃຫ້ເປັນບັນຫາອັນຫຍຸ້ງ-
ຍາກ ຈັ່ງແພ່ລາມໄປໃຫ້ຫລາຍຄົນເປັນມົນທິນນຳ
12:16 ບໍ່ຊັ້ນ ອາດ ເກີດມີການຫລິ້ນຊູ້ ຫລືມີຄົນດູໝິ່ນບໍ່ໃຫ້ກຽດ *ພຣະເຈົ້າ* ຄືເຖົ້າ
ເອຊາວ ຜູ້ທີ່ຂາຍກຳມະສິດໃນມໍລະດົກການເປັນລູກກົກຂອງໂຕ ແລກເອົາເພື່ອ
ແນວກິນນ້ອຍດຽວ
12:17 ຄື ພວກເຈົ້າຮູ້ຢູ່ແລ້ວວ່າ ຕໍ່ມາພາຍຫລັງບັດເຖົ້າ ເອຊາວ ຢາກຮັບພົນຂອງ
ມໍລະດົກນັ້ນ ລາວ ຈັ່ງຖືກປະຕິເສດ ແມ່ນແຕ່ຊິກັບໃຈຊອກຫາຈົນນ້ຳຕາໄຫລ ກໍ
ບໍ່ມີທາງແກ້ໄຂໄດ້ເລີຍ
12:18 ຄື ພວກເຈົ້າບໍ່ໄດ້ມາຫາພູເຂົາທີ່ຊິຈັບຕ້ອງໄດ້ *ຄືກັນກັບພູເຂົາ ຊີນາຍ* ທີ່ມີ
ໄຟລຸກ ມີຄວາມມືດທຶບຫຸ້ມໄວ້ ກັບມີລົມພະຍຸແຮງ
12:19 ກັບມີສຽງແກ ມີພຣະສຸລະສຽງອັນເປັນຕາຢ້ານເວົ້າຢູ່ນັ້ນ ຊຶ່ງໝູ່ຄົນທີ່ໄດ້ຍິນ
ກໍໄດ້ຮ້ອງຂໍບໍ່ໃຫ້ເວົ້າກັບເຂົາອີກຕໍ່ໄປ
12:20 (ຍ້ອນວ່າຂໍ້ບັນຍັດທີ່ໄດ້ສັ່ງໄວ້ນັ້ນເຂົາທົນເອົາບໍ່ໄດ້ເລີຍ ທີ່ວ່າ "ແມ່ນແຕ່ຄັ່ນ
ສັດແຕະຕ້ອງພູເຂົາ ມັນຊິຕ້ອງຕາຍ ໂດຍຖືກກ້ອນຫີນແກວ່ງໃສ່ ຫລືຖືກຍິງດ້ວຍ
ລູກທະນູ"
12:21 ແລ້ວ ແນວທີ່ຄົນໝູ່ນັ້ນໄດ້ເຫັນກໍເປັນຕາຢ້ານສຸດໆ ຈົນວ່າເຖົ້າ ໂມເຊ ເອງກໍ
ເວົ້າວ່າ *"ຂ້ອຍຢ້ານຫລາຍຈົນໂຕສັ່ນ"* )
12:22 ແຕ່ບັດນີ້ ພວກເຈົ້າໄດ້ມາເຖິງພູເຂົາ ຊີໂອນ ກັບໄດ້ມາເຖິງເມືອງສຸກຂະເສີມ
ຂອງພຣະເຈົ້າຜູ້ດຳລົງຢູ່ ຄື ກຸງເຢຣູຊາເລັມ ຢູ່ເມືອງສະຫວັນ ກັບມາເຖິງເທວະ-
ທູດຫລວງຫລາຍຈົນນັບບໍ່ໄດ້

12:23 ກັບມາເຖິງຊຸມຊົນອັນໃຫຍ່ຫລວງ ກັບເຖິງກຸ່ມຜູ້ເຊື່ອຂອງຜູ້ເກີດກ່ອນ ຄືຜູ້ມີ
ຊື່ຈາລຶກໄວ້ໃນສະຫວັນແລ້ວ ກັບເຖິງພຣະເຈົ້າ ຜູ້ພິພາກສາຂອງຜູ້ຄົນທັງປວງ
ກັບເຖິງຈິດວິນຍານຂອງຄົນຊອບທຳ ຜູ້ທີ່ໄດ້ຮັບສູ່ສະພາບດີພ້ອມສົມບູນແບບ
ແລ້ວ
12:24 ກັບມາເຖິງ ພຣະເຢຊູ ຜູ້ເປັນຄົນກາງຂອງພັນທະສັນຍາໃໝ່ ກັບເຖິງພຣະ-
ໂລຫິດທີ່ສັ່ນໃສ່ແທ່ນບູຊານັ້ນ ຊຶ່ງກ່າວເຖິງແນວປະເສີດກວ່າຂອງເຖົ້າ ອາເບນ
12:25 ຈັ່ງຊັ້ນ ໃຫ້ລະວັງເດີ້ ຢ່າປະຕິເສດສຽງຂອງເພິ່ນ ຜູ້ທີ່ພວມເວົ້າຢູ່ດຽວນີ້ ຄື
ຄັ່ນຄົນພວກນັ້ນບໍ່ໄດ້ພົ້ນໂທດ ຜູ້ທີ່ປະຕິເສດເພິ່ນຕອນເພິ່ນໄດ້ເວົ້າຢູ່ໃນໂລກ
ແຮງຫລາຍກວ່ານັ້ນອີກ ຄັ່ນພວກເຮົາຫັນຫລັງອອກຈາກເພິ່ນໄປ ບັດເພິ່ນພວມ
ເວົ້າກັບເຮົາຈາກສະຫວັນ ພວກເຮົາຊິພົ້ນໂທດໄດ້ຈັ່ງໃດ
12:26 ຄືຕອນນັ້ນ ພຣະສຸລະສຽງຂອງເພິ່ນເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນ ແຕ່
ບັດນີ້ເພິ່ນໄດ້ສັນຍາໄວ້ວ່າ "ເຮົາຊິເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນອີກເທື່ອ
ໜຶ່ງ ແລ້ວບໍ່ແມ່ນແຜ່ນດິນໂລກຢ່າງດຽວ ແຕ່ຮອດສະຫວັນພ້ອມນຳ"
12:27 ບັດນີ້ ທີ່ເພິ່ນໄດ້ວ່າ *"ອີກເທື່ອໜຶ່ງ"* ນັ້ນ ໝາຍເຖິງເພິ່ນຊິກວາດລ້າງແນວບໍ່
ຖາວອນ ໃຫ້ຖືກສັ່ນ ສະເທືອນອອກໄປ ຄືແນວທີ່ຖືກສ້າງຂຶ້ນມານັ້ນ ເພື່ອແນວ
ຖາວອນທີ່ບໍ່ມີການສັ່ນສະເທືອນ ຊິຄົງໄວ້ຢູ່ຕໍ່
12:28 ຈັ່ງຊັ້ນ ເນື່ອງດ້ວຍວ່າ ພວກເຮົາຊິຮັບອານາຈັກຖາວອນທີ່ບໍ່ມີການສັ່ນສະ-
ເທືອນ ຂໍໃຫ້ໃຈຂອງພວກເຮົາມີພຣະກະລຸນາທິຄຸນ ເພື່ອພວກເຮົາຊິຮັບໃຊ້ພຣະ-
ເຈົ້າ ດ້ວຍຄວາມເຄົາລົບເຄົາລົບ ໃນທາງອັນເປັນທີ່ຍອມຮັບຂອງເພິ່ນ
12:29 ຍ້ອນວ່າ ພຣະເຈົ້າຂອງພວກເຮົາ ຄືເປັນເພີງເຜົາຜານ

## ເຮັບເຣີ ບົດທີ 13

13:1 ໃຫ້ຄວາມຮັກແພງລະຫວ່າງພີ່ນ້ອງດຳເນີນຢູ່ສະເໝີໄປເດີ້
13:2 ແລ້ວຢ່າລືມທີ່ຊິຕ້ອນຮັບແຂກແປກໜ້າ ຍ້ອນວ່າ ການເຮັດແນວນັ້ນ ຜູ້ລາງ
ຄົນເຄີຍຕ້ອນຮັບເທວະທູດໂດຍບໍ່ຮູ້ເນື້ອໂຕ
13:3 ແລ້ວກໍໃຫ້ຄຶດພໍ້ໝູ່ພວກທີ່ພວມຖືກລ່າມໂສ້ຈອງຈຳໄວ້ເດີ້ ຜູ້ຖືກຂຸກຍູ້ຍ້ອນ
ເຫັນແກ່ຂ່າວປະເສີດ ຖືວ່າພວກເຈົ້າໄດ້ຖືກຄືກັນກັບເຂົາ

13:4 ການແຕ່ງງານກັນເປັນສິ່ງທີ່ຖືກຕ້ອງ ເປັນທີ່ນັບຖືຂອງຄົນທັງຫລາຍ ກັບຕຽງ-
ນອນຂອງເຂົາກໍເປັນທີ່ບໍລິສຸດບໍ່ມີມົນທິນເລີຍ ແຕ່ສ່ວນຜູ້ທີ່ລ່ວງປະເວນີ ກັບຜູ້ທີ່
ຫລິ້ນຊູ້ຜົວເມຍກັນນັ້ນ ພຣະເຈົ້າຊິພິພາກສາລົງໂທດ
13:5 ຂໍຢ່າໃຫ້ພຶດຕິກຳຂອງພວກເຈົ້າມີການໂລບການອິດສາເລີຍ ແຕ່ໃຫ້ພໍໃຈໃນ
ສິ່ງຂອງທີ່ໂຕມີ ຍ້ອນວ່າ ພຣະເຈົ້າເພິ່ນເອງກໍຍັງກ່າວໄວ້ວ່າ *“ເຮົາຊິບໍ່ໜີຈາກເຈົ້າ
ຫລືປະຖິ້ມເຈົ້າຈັກເທື່ອ”*
13:6 ເພື່ອພວກເຮົາຊິສາມາດເວົ້າດ້ວຍໃຈກ້າວ່າ “ອົງພຣະຜູ້ເປັນເຈົ້າເປັນພຣະຜູ້
ຊ່ອຍຂອງຂ້ອຍ ຈັ່ງຊັ້ນ ຂ້ອຍຊິບໍ່ຢ້ານອີຫຍັງເລີຍ ມີອີຫຍັງບໍ້ ທີ່ມະນຸດຊິສາມາດ
ເຮັດໃສ່ຂ້ອຍໄດ້”
13:7 ຢ່າລືມຄົນໝູ່ນັ້ນທີ່ປົກຄອງເໜືອພວກເຈົ້າເດີ້ ຄືຜູ້ທີ່ເຄີຍໄດ້ບອກສອນ ພຣະ-
ຄຳ ຂອງພຣະເຈົ້າໃຫ້ພວກເຈົ້າ ຈັ່ງໃຫ້ຕາມຄວາມເຊື່ອຂອງເຂົາເປັນແບບຢ່າງເດີ້
ໂດຍພິຈາລະນາເບິ່ງຜົນຊີວິດຂອງເຂົາ
13:8 ພຣະເຢຊູຄຣິດ ຍັງຄືເກົ່າຢູ່ສະເໝີ ບໍ່ວ່າໃນອະດີດ ໃນປະຈຸບັນ ຈົນຮອດຕະ-
ຫລອດໄປເປັນນິດ
13:9 ຢ່າຫລົງໄປຕາມຄຳສອນຕ່າງໆ ນານາ ອັນແປກໆ ຍ້ອນວ່າມັນເປັນການດີຢູ່
ແລ້ວ ທີ່ມີໃຈເຂັ້ມແຂງ ຕັ້ງໝັ້ນຢູ່ໃນພຣະກະລຸນາທິຄຸນ ບໍ່ແມ່ນອຸ່ນແຕ່ໃນພິທີຮີດ-
ຄອງເລື່ອງແນວຢູ່ແນວກິນ ວ່າອີຫຍັງຜິດອີຫຍັງຖືກ ຊຶ່ງບໍ່ເຄີຍເປັນປະໂຫຍດໃຫ້
ກັບຜູ້ທີ່ຮວມກັນແຕ່ໃນນັ້ນ
13:10 ຄື ບັດນີ້ພວກເຮົາມີແທ່ນບູຊາອີກແທ່ນໜຶ່ງ ຊຶ່ງຜູ້ທີ່ຮັບໃຊ້ໃນວິຫານເຄື່ອນທີ່
ເດີມນັ້ນ ບໍ່ມີສິດກິນໄດ້ເລີຍ
13:11 ໂດຍວ່າ ຊາກສົບຂອງສັດຊຸມນັ້ນ ທີ່ປະໂລຫິດໄດ້ນຳເອົາເລືອດຂອງມັນ
ເຂົ້າໄປໃນສະຖານສັກສິດເພື່ອເປັນການບູຊາລົບລ້າງບາບນັ້ນ ກໍຕ້ອງເອົາອອກ
ໄປເຜົາຢູ່ນອກເຂດຄ້າຍ
13:12 ຈັ່ງຊັ້ນ ພຣະເຢຊູ ຈັ່ງທົນທຸກທໍລະມານຢູ່ນອກເຂດປະຕູຄ້າຍຄືກັນ ເພື່ອຊຳ-
ລະໃຫ້ປະຊາຊົນບໍລິສຸດດ້ວຍພຣະໂລຫິດຂອງເພິ່ນເອງ

13:13 ຈັ່ງຊັ້ນ ໃຫ້ຄົນເຮົາອອກໄປຫາເພິ່ນຢູ່ນອກຄ້າຍນັ້ນ ແລ້ວຍອມຮັບເອົາຄຳດູ-
ໝິ່ນດູຖູກນຳເພິ່ນ
13:14 ໂດຍວ່າ ຢູ່ທາງນີ້ ພວກເຮົາບໍ່ມີເມືອງທີ່ຊິອາໄສຢູ່ອັນຖາວອນ ແຕ່ວ່າພວກ
ເຮົາຊອກຫາເມືອງນັ້ນ ທີ່ຊິມາໃນພາຍໜ້າ
13:15 ຈັ່ງຊັ້ນ ຂໍໃຫ້ພວກເຮົາຖວາຍຄຳສັນລະເສີນຕະຫລອດໄປ ໂດຍທາງ ພຣະ-
ເຢຊູ ນັ້ນ ເປັນເຄື່ອງບູຊາແດ່ພຣະເຈົ້າ ເປັນຜົນປາກຂອງພວກເຮົາ ທີ່ຖວາຍຄຳ
ຂອບຄຸນແດ່ພຣະນາມຂອງເພິ່ນ
13:16 ແຕ່ຢ່າລືມທີ່ຊິເຮັດການດີ ກັບແບ່ງປັນເຂົ້າຂອງຊ່ອຍຊຶ່ງກັນແລະກັນເດີ້
ຍ້ອນການເຮັດຈັ່ງຊີ້ ເປັນເຄື່ອງຖວາຍທີ່ພຣະເຈົ້າຄວນພໍໃຈຫລາຍ
13:17 ໃຫ້ຍອມເຊື່ອຟັງພວກຜູ້ປົກຄອງຂອງພວກເຈົ້າ ດ້ວຍໃຈອ່ອນນ້ອມເດີ້ ແມ່ນ
ພວກເຂົາຄອຍຖ້າເບິ່ງແຍງຈິດວິນຍານຂອງພວກເຈົ້າໄວ້ ແລ້ວຊິຕ້ອງໃຫ້ຄຳ
ລາຍງານຕໍ່ພຣະເຈົ້ານຳ ແຕ່ຂໍເປັນວ່າ ເຂົາຊິລາຍງານດ້ວຍຄວາມຊົມຊື່ນຍິນດີ ບໍ່
ແມ່ນດ້ວຍຄວາມເສົ້າໃຈ ຊຶ່ງຊິບໍ່ໄດ້ເປັນປະໂຫຍດໃຫ້ພວກເຈົ້າ
13:18 ໃຫ້ຊ່ອຍອະທິຖານເພື່ອພວກເຮົາເດີ້ ຄື ມີຄວາມເຊື່ອໝັ້ນວ່າ ຈິດສຳນຶກ
ຂອງພວກເຮົາໂປ່ງໃສດີ ປາດຖະໜາດຳເນີນຊີວິດຢ່າງມີກຽດໃນທຸກຢ່າງ
13:19 ແຕ່ຂ້ອຍຂໍວິງວອນພວກເຈົ້າໃຫ້ອະທິຖານເພື່ອຂ້ອຍເປັນພິເສດ ເພື່ອຂ້ອຍຊິ
ໄດ້ກັບໄປຫາພວກເຈົ້າໃນໄວໆ ນີ້
13:20 ບັດນີ້ ຂໍໃຫ້ພຣະເຈົ້າແຫ່ງສັນຕິພາບ ຜູ້ບັນດານໃຫ້ ພຣະເຢຊູເຈົ້າ ຂອງເຮົາ
ເປັນຂຶ້ນມາຈາກຕາຍ ແມ່ນຜູ້ລ້ຽງແກະອັນໃຫຍ່ຫລວງນັ້ນ ໂດຍທາງພຣະໂລຫິດ
ຂອງພັນທະສັນຍາ ທີ່ດຳລົງຢູ່ຕະຫລອດການ
13:21 ຂໍໃຫ້ພຣະເຈົ້າຊ່ອຍໃຫ້ພວກເຈົ້າເຖິງທີ່ສົມບູນແບບໃນການດີທຸກຢ່າງ ຕາມ
ພຣະປະສົງຂອງເພິ່ນ ຊຶ່ງເຮັດການງານຂອງເພິ່ນໃນພວກເຈົ້າຕາມທີ່ຄວນພໍໃຈ
ໃນສາຍຕາຂອງເພິ່ນ ໂດຍທາງ ພຣະເຢຊູຄຣິດ ຈັ່ງຂໍໃຫ້ສະຫງ່າລາສີຈົ່ງມີແດ່
ເພິ່ນຕະຫລອດໄປເປັນນິດ ອາເມນ
13:22 ສຸດທ້າຍນີ້ ພີ່ນ້ອງທັງຫລາຍເອີຍ ຂ້ອຍຂໍວິງວອນພວກເຈົ້າ ໃຫ້ທົນຟັງຄຳ-
ເຕືອນສະຕິຂອງຂ້ອຍນີ້ເດີ້ ທີ່ຂ້ອຍໄດ້ຂຽນເປັນນ້ອຍຄຳນີ້ມາຍັງພວກເຈົ້າ

13:23 ແລ້ວໃຫ້ຮູ້ກັນວ່າ ທ້າວ ຕີໂມທຽວ ຜູ້ເປັນນ້ອງຂອງພວກເຮົານັ້ນ ໄດ້ປ່ອຍ
ອອກຈາກການຈອງຈໍາແລ້ວ ແລ້ວຄັນເຂົາມາໄວໆ ນີ້ ຂ້ອຍກໍຊິໄດ້ມາຫາພວກ
ເຈົ້າຢູ່ນໍາກັນກັບເຂົາ
13:24 ບັດນີ້ ຂໍຝາກຄວາມຄຶດຮອດໄປຍັງພວກຜູ້ປົກຄອງຂອງພວກເຈົ້າແໜ່ເດີ້
ກັບຄົນຂອງພຣະເຈົ້າທັງຫລາຍນໍາແໜ່ ພວກພີ່ນ້ອງຊາວ ອີຕາລີ ທີ່ຢູ່ທາງພີ້ໄດ້
ຝາກຄວາມຄຶດຮອດມາຍັງພວກເຈົ້ານໍາ
13:25 ຂໍພຣະກະລຸນາທິຄຸນຂອງພຣະເຈົ້າດໍາລົງຢູ່ກັບພວກເຈົ້າທັງຫລາຍເຖີ້ນ
ອາເມນ

*[ຂຽນເຖິງຊາວເຮັບເຣີ ສົ່ງມາໂດຍນາຍ ຕີໂມທຽວ ]*

# ຢາໂກໂບ

## ຢາໂກໂບ ບົດທີ 1

1:1 ຈາກ ຢາໂກໂບ ຂ້າຮັບໃຊ້ຂອງພຣະເຈົ້າ ກັບຂອງພຣະເຢຊູຄຣິດເຈົ້ານໍາ ເຖິງ
ຊາວຢິວ ສິບສອງຕະກູນທີ່ຖືກກະຈັກກະຈາຍອອກໄປຫັ້ນ ໃຫ້ຊື່ນຊົມຍິນດີເຖີດ
1:2 ພີ່ນ້ອງຂອງຂ້ອຍເອີຍ ໃຫ້ຊື່ນຊົມຍິນດີເຖີດ ບັດພວກເຈົ້າຕົກຢູ່ໃນການທົດ-
ລອງແນວຕ່າງໆ
1:3 ໂດຍຮູ້ກັນແລ້ວວ່າ ການທົດລອງຄວາມເຊື່ອຂອງເຈົ້ານັ້ນ ເຮັດໃຫ້ເກີດຄວາມ
ອົດທົນພາກພຽນ
1:4 ແຕ່ໃຫ້ຄວາມອົດທົນພາກພຽນຂອງເຈົ້ານັ້ນເຖິງຜົນສໍາເລັດເດີ້ ເພື່ອພວກເຈົ້າ
ຊິເຖິງການດີພ້ອມສົມບູນແບບ ຢ່າງຄົບຖ້ວນ ບໍ່ໄດ້ຂາດອີຫຍັງ
1:5 ຄັນຜູ້ໃດໃນພວກເຈົ້າຂາດປັນຍາ ກໍໃຫ້ຜູ້ນັ້ນຂໍຈາກພຣະເຈົ້າ ຜູ້ເພິ່ນທີ່ຍິນດີ
ໃຫ້ໝົດຄູ່ຄົນຢ່າງເຫລືອລົ້ນໂດຍບໍ່ມີຕິຕຽນ ແລ້ວເພິ່ນກໍຊິໂຜດໃຫ້ເຂົາ ໂລດ
1:6 ແຕ່ໃຫ້ຜູ້ນັ້ນຂໍດ້ວຍຄວາມເຊື່ອ ບໍ່ມີການສົງໄສເລີຍ ຍ້ອນວ່າຜູ້ທີ່ສົງໄສກໍຄືຄື້ນ
ໃນທະເລ ຖືກລົມພັດຊັດໄປຊັດມາ
1:7 ຄື ຢ່າໃຫ້ເຂົາຄຶດວ່າຊິໄດ້ຮັບອີຫຍັງຈາກອົງພຣະຜູ້ເປັນເຈົ້າເລີຍ
1:8 ຍ້ອນວ່າຄົນສອງຈິດສອງໃຈເປັນຄົນບໍ່ໝັ້ນຄົງໃນຄູ່ທາງຂອງເຂົານັ້ນ

1:9 ຝ່າຍພີ່ນ້ອງຜູ້ຍາກຈົນທີ່ຢູ່ໃນຖານະຕ່ຳ ໃຫ້ເຂົາຊື່ນຊົມຍິນດີ ທີ່ເຂົາຖືກຍົກ-
ຍ້ອງເຊີດຊູ
1:10 ແຕ່ຝ່າຍພີ່ນ້ອງຜູ້ຮັ່ງມີທີ່ຢູ່ໃນຖານະສູງ ກໍໃຫ້ເຂົາຊື່ນຊົມຍິນດີບັດຖືກຢຽດ
ຍາມໃຫ້ຕ່ຳລົງ ຍ້ອນວ່າເຂົາຊິຜ່ານພົ້ນໄປຄືດອກຫຍ້າກາງທົ່ງນາ
1:11 ຍ້ອນວ່າ ບັດຕະເວັນຂຶ້ນມາສ່ອງແດດຮ້ອນໆ ຫຍ້ານັ້ນກໍຊິຫ່ຽວແຫ້ງໄປ ແລ້ວ
ດອກຫຍ້ານັ້ນກໍຊິຜ່ານພົ້ນໄປນຳ ແລ້ວຄວາມງາມຂອງມັນກໍຊິສູນສິ້ນໄປນຳ
ຄົນຮັ່ງມີກໍຄືກັນ ເຂົາກໍຊິຜ່ານພົ້ນໄປຕາມທາງຂອງເຂົາຄືກັນ
1:12 ແລ້ວຜູ້ທີ່ທົນເອົາໄດ້ຕໍ່ການທົດລອງກໍໄດ້ພົບເປັນສຸກ ຄືວ່າ ບັດເຂົາທົນໄດ້
ແລ້ວ ເຂົາກໍຊິໄດ້ຮັບມົງກຸດແຫ່ງຊີວິດ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ສັນຍາໄວ້ວ່າຊິ-
ມອບໃຫ້ຜູ້ທີ່ຮັກເພິ່ນ
1:13 ແລ້ວຢ່າໃຫ້ຜູ້ໃດຜູ້ໜຶ່ງຫາເວົ້າວ່າ *"ພຣະເຈົ້າຫລອກລໍ້ຂ້ອຍໃຫ້ຫລົງ"* ຍ້ອນ
ວ່າພຣະເຈົ້າບໍ່ສາມາດຖືກການຫລອກລໍ້ໃຫ້ຫລົງ ກັບເພິ່ນບໍ່ເຄີຍຫລອກລໍ້ຜູ້ໃດ
ໃຫ້ຫລົງເລີຍ
1:14 ແຕ່ວ່າ ຄູ່ຄົນກໍຖືກຫລອກລໍ້ ບັດຕັນຫາຂອງໂຕເຂົາເອງເກືອບນຳໃຫ້ຫລົງ
ແລ້ວໂຕເຂົາກໍຫລົງໄປຕາມຫັ້ນ
1:15 ບັດຕັນຫາພຸ່ງໂຕຂຶ້ນແລ້ວ ກໍເຮັດໃຫ້ເກີດເປັນບາບ ແລ້ວບັດບາບນັ້ນເຖິງ
ເຕັມທີ່ແລ້ວ ມັນກໍນຳໄປສູ່ຄວາມຕາຍ
1:16 ພີ່ນ້ອງທີ່ຮັກຂອງຂ້ອຍເອີຍ ຢ່າຫລົງເຂົ້າໃຈຜິດເດີ້
1:17 ແນວດີງາມກັບແນວດີເລີດຄູ່ຢ່າງຄວນມາຈາກ *ສະຫວັນ* ລົງມາຈາກພຣະ-
ເຈົ້າຜູ້ເປັນພໍ່ຂອງດວງສະຫວ່າງທັງຫລາຍ ຊຶ່ງເພິ່ນຜູ້ນັ້ນບໍ່ມີການປ່ຽນແປງ ຄືເງົາ
ທີ່ໝຸນວຽນປ່ຽນໄປ
1:18 ແລ້ວພຣະເຈົ້າໃຫ້ພວກເຮົາເກີດໃໝ່ໂດຍ ພຣະຄຳ ແຫ່ງຄວາມຈິງ ຕາມພຣະ-
ປະສົງຂອງເພິ່ນ ເພື່ອພວກເຮົາຊິໄດ້ເປັນໂຕຢ່າງຂອງຜົນແຮກໃນແນວທີ່ເພິ່ນ
ສ້າງນັ້ນ
1:19 ຈັ່ງຊັ້ນ ພີ່ນ້ອງທີ່ຮັກຂອງຂ້ອຍເອີຍ ໃຫ້ຄູ່ຄົນໄວໃນການຟັງ ຊ້າໃນການເວົ້າ
ກັບຊ້າໃນການຮ້າຍ

1:20 ຍ້ອນວ່າການຮ້າຍຂອງຄົນບໍ່ເປັນເຫດໃຫ້ເກີດຄວາມຊອບທຳຂອງພຣະເຈົ້າ
1:21 ຈັ່ງຊັ້ນ ໃຫ້ຖອດຖິ້ມແນວສົກກະປົກລາມົກຄູ່ຢ່າງ ກັບແນວຊົ່ວຮ້າຍອັນລ່ວງ
ເກີນ ແລ້ວຮັບເອົາ ພຣະຄຳ ນັ້ນທີ່ປຸກໄວ້ໃນໃຈດ້ວຍຄວາມນອບນ້ອມເດີ້ ຊຶ່ງສາ-
ມາດເຮັດໃຫ້ຈິດໃຈຂອງພວກເຈົ້າລອດພົ້ນໄດ້
1:22 ແຕ່ໃຫ້ເປັນຜູ້ປະຕິບັດຕາມ ພຣະຄຳ ນັ້ນ ບໍ່ແມ່ນພຽງແຕ່ເປັນຜູ້ຟັງເອົາຊື່ໆ ຊຶ່ງ
ເປັນການຫລອກລວງໂຕເອງ
1:23 ຍ້ອນວ່າ ຄັ່ນຜູ້ໃດຮັບຟັງ ພຣະຄຳ ແລ້ວບໍ່ໄດ້ປະຕິບັດຕາມ ຜູ້ນັ້ນຄືຄົນເບິ່ງ
ໜ້າຂອງໂຕເອງໃນແກ້ວຊື່ໆ
1:24 ຄື ຄົນແບບນັ້ນເບິ່ງໂຕເອງແລ້ວກໍອອກໄປຊື່ໆ ແລ້ວບຶດດຽວກໍລືມວ່າສະພາບ
ໂຕເປັນຈັ່ງໃດ
1:25 ແຕ່ຝ່າຍຜູ້ທີ່ພິຈາລະນາເບິ່ງໃນກົດບັນຍັດແຫ່ງເສລີພາບອັນດີເລີດນັ້ນ ແລ້ວ
ຈັ່ງດຳລົງຢູ່ໃນຫັ້ນ ຜູ້ນັ້ນບໍ່ໄດ້ເປັນແຕ່ຜູ້ຮັບຟັງແລ້ວຫລົງລືມ ແຕ່ເປັນຜູ້ປະຕິບັດ
ຕາມການງານ ແລ້ວເຂົາຜູ້ນີ້ຊິໄດ້ພົບເປັນສຸກໃນການຂອງຕົນ
1:26 ຄັ່ນຜູ້ໃດໃນພວກເຈົ້າ ຖືວ່າເຄັ່ງຄັດໃນທາງນະມັດສະການ ແລ້ວບໍ່ໄດ້ຄວບ-
ຄຸມລີ້ນຂອງໂຕໄວ້ ແຕ່ຫລອກໃຈຂອງໂຕເອງ ການນະມັດສະການຂອງຜູ້ນັ້ນກໍບໍ່
ມີປະໂຫຍດອີຫຍັງ
1:27 ໂດຍວ່າ ການນະມັດສະການທີ່ບໍລິສຸດ ບໍ່ມີມົນທິນຕໍ່ໜ້າພຣະເຈົ້າຜູ້ເປັນພໍ່ ກໍ
ຄື ການຢ້ຽມຢາມຊ່ອຍລູກກຳພ້າຜູ້ບໍ່ມີພໍ່ ກັບແມ່ໝ້າຍຜູ້ເປັນທຸກເປັນຮ້ອນ ກັບ
ການຮັກສາໂຕໃຫ້ພົ້ນຈາກແນວທີ່ພາເປັນມົນທິນຝ່າຍໂລກນີ້

## ຢາໂກໂບ ບົດທີ 2

2:1 ພີ່ນ້ອງທັງຫລາຍຂອງຂ້ອຍເອີຍ ສ່ວນຄວາມເຊື່ອໃນ ພຣະເຢຊູຄຣິດ ນາຍຊີ-
ວິດຂອງພວກເຮົານັ້ນ ຜູ້ປະກອບດ້ວຍສະຫງ່າລາສີ ຢ່າໃຫ້ມີການລຳອຽງເລືອກ
ໜ້າຜູ້ໃດເລີຍ
2:2 ຍ້ອນວ່າ ຄັ່ນມີຄົນໃດຄົນໜຶ່ງໄດ້ເຂົ້າມາໃນກຸ່ມພວກເຈົ້າ ສວມແຫວນທອງຄຳ
ແຕ່ງໂຕດ້ວຍເສື້ອຜ້າໜ້າແພຢ່າງດີ ແລ້ວກໍມີຄົນຈົນຄົນໜຶ່ງແຕ່ງໂຕໃສ່ເສື້ອຜ້າ
ເກົ່າຂາດໆ ເຂົ້າມາຄືກັນ

2:3 ແລ້ວເຈົ້າສົນໃຈຄົນທີ່ໃສ່ເສື້ອຜ້າໜ້າແພຢ່າງດີນັ້ນ ເວົ້າກັບເຂົາວ່າ *"ເຊີນມາ
ນັ່ງບ່ອນດີໆ ນີ້ເຖີ"* ແລ້ວກໍເວົ້າກັບຄົນຈົນນັ້ນວ່າ *"ໃຫ້ເຈົ້າຢືນຢູ່ຫັ້ນເດີ້"* ຫລື
*"ໃຫ້ມານັ່ງຢູ່ມ້າພັກຕີນຂອງເຮົານີ້ແມ່ະ"*
2:4 ບໍ່ແມ່ນພວກເຈົ້າສະແດງຄວາມລຳອຽງເອງ ຈັ່ງກາຍເປັນຜູ້ຕັດສິນດ້ວຍຄວາມ
ຄິດຊົ່ວຊັ້ນບໍ້
2:5 ໃຫ້ຟັງເອົາເດີ້ ພີ່ນ້ອງທີ່ຮັກຂອງຂ້ອຍເອີຍ ບໍ່ແມ່ນບໍ້ ທີ່ພຣະເຈົ້າໄດ້ເລືອກຄົນ
ຍາກຈົນທາງໂລກນີ້ໃຫ້ເປັນຄົນຮັ່ງມີທາງຄວາມເຊື່ອ ກັບໃຫ້ເປັນຜູ້ຮັບມໍລະດົກ
ໃນລາຊະອານາຈັກຂອງພຣະເຈົ້າ ຊຶ່ງເພິ່ນໄດ້ສັນຍາໄວ້ວ່າຊິໂຜດໃຫ້ຜູ້ທີ່ຮັກເພິ່ນ
2:6 ແມ່ນຄົນຮັ່ງມີທີ່ກົດຂີ່ພວກເຈົ້າ ກັບລາກໄປຂຶ້ນສານ ບໍ່ແມ່ນບໍ້ ແຕ່ພວກເຈົ້າກໍ
ຍັງລົບຫລູ່ດູໝິ່ນຄົນຈົນ
2:7 ບໍ່ແມ່ນຄົນພວກນີ້ບໍ້ ທີ່ໝິ່ນປະມາດພຣະນາມອັນປະເສີດຂອງເພິ່ນ ຊຶ່ງພວກ
ເຈົ້າໄດ້ຮັບການເອີ້ນການເຊີນມານັ້ນ
2:8 ຄັນພວກເຈົ້າສາມາດເຮັດກົດບັນຍັດອັນດີເລີດໃຫ້ສຳເລັດໄດ້ ຕາມ ພຣະຄຳ ທີ່
ວ່າ *"ໃຫ້ຮັກເພື່ອນບ້ານຄືກັນກັບຮັກໂຕເອງ"* ພວກເຈົ້າກໍເຮັດດີຢູ່ແລ້ວ
2:9 ແຕ່ຄັນພວກເຈົ້າມີການລຳອຽງເລືອກໜ້າຄົນ ເຈົ້າກໍເຮັດບາບ ຊຶ່ງຕາມກົດບັນ-
ຍັດນັ້ນພວກເຈົ້າໄດ້ຫລົງລະເມີດໄປແລ້ວ
2:10 ໂດຍວ່າ ຜູ້ໃດກໍຕາມທີ່ສາມາດຮັກສາກົດບັນຍັດໄດ້ໝົດ ແຕ່ຜິດຢູ່ພຽງຂໍ້ດຽວ
ຜູ້ນັ້ນກໍທໍ່ກັບຜິດກົດບັນຍັດໝົດຄູ່ຂໍ້ເລີຍ
2:11 ຄື ຜູ້ທີ່ກ່າວໄວ້ວ່າ *"ຢ່າລ່ວງປະເວນີຜົວເມຍເຂົາ"* ກໍໄດ້ກ່າວໄວ້ອີກວ່າ *"ຢ່າ
ຂ້າຄົນ"* ບັດນີ້ ແມ່ນແຕ່ເຈົ້າບໍ່ໄດ້ລ່ວງປະເວນີຜົວເມຍກັນ ແຕ່ໄດ້ຂ້າຄົນ ເຈົ້າໄດ້
ກາຍເປັນຜູ້ລະເມີດກົດບັນຍັດຢູ່ແລ້ວ
2:12 ຈັ່ງຊັ້ນ ໃຫ້ການເວົ້າກັບການເຮັດຂອງພວກເຈົ້າເປັນຢ່າງຜູ້ທີ່ຊິຮັບການພິ-
ພາກສາໂດຍກົດແຫ່ງເສລີພາບ
2:13 ໂດຍວ່າ ການພິພາກສາບໍ່ໃຫ້ຄວາມເມດຕາຕໍ່ຜູ້ທີ່ບໍ່ໃຫ້ຄວາມເມດຕາ ແຕ່
ຄວາມເມດຕານັ້ນມີໄຊເໜືອການພິພາກສາ

2:14 ພີ່ນ້ອງຂອງຂ້ອຍເອີຍ ຄັນຜູ້ໃດຊິວ່າໂຕເອງມີຄວາມເຊື່ອ ແຕ່ບໍ່ມີຜົນສະແດງ
ອອກ ຄວາມເຊື່ອຈັ່ງຊັ້ນຊິໄດ້ກຳໄລອີຫຍັງ ສາມາດພາຜູ້ນັ້ນລອດໄດ້ບໍ້
2:15 ຄື ຄັນພີ່ນ້ອງຊາຍຍິງຄົນໃດເປືອຍບໍ່ຂາດແຄນອາຫານປະຈຳມື້
2:16 ແລ້ວມີຄົນໜຶ່ງໃນພວກເຈົ້າບອກເຂົາວ່າ *"ເຊີນໄປເຖີ ຂໍໃຫ້ອົບອຸ່ນອິ່ມພົນ
ເປັນສຸກເດີ້"* ແຕ່ບໍ່ໄດ້ລົງມືຊ່ອຍເຂົາແນວຈຳເປັນຕໍ່ຮ່າງກາຍເລີຍ ມັນຊິເປັນປະ-
ໂຫຍດອີຫຍັງ
2:17 ຈັ່ງຊັ້ນ ຄວາມເຊື່ອຢ່າງດຽວ ຄັນຂາດຜົນສະແດງອອກ ກໍສໍ່າຕາຍໄປຕາມລຳ
ພັງແລ້ວ
2:18 ແຕ່ ອາດ ມີຜູ້ໜຶ່ງເວົ້າວ່າ "ເຈົ້າວ່າມີຄວາມເຊື່ອ ແລ້ວຂ້ອຍກໍມີການເຮັດ ໃຫ້
ເຈົ້າສະແດງຄວາມເຊື່ອຂອງເຈົ້າໃຫ້ຂ້ອຍເຫັນນອກການເຮັດ ແລ້ວຂ້ອຍກໍຊິສະ-
ແດງຄວາມເຊື່ອຂອງຂ້ອຍໃຫ້ເຈົ້າເຫັນໂດຍທາງການເຮັດຂອງຂ້ອຍ"
2:19 ເຈົ້າເຊື່ອວ່າມີພຣະເຈົ້າອົງດຽວເນາະ ນັ້ນກໍດີຢູ່ ແມ່ນແຕ່ພວກຜີກໍຍັງເຊື່ອຄື
ກັນ ແລ້ວຢ້ານຈົນໂຕສັ່ນ
2:20 ໂອ ຄົນເບົາປັນຍາເອີຍ ເຈົ້າຄືບໍ່ຮູ້ບໍ້ວ່າ ຄວາມເຊື່ອທີ່ຂາດການເຮັດ ກໍສໍ່າ
ຕາຍໄປແລ້ວ
2:21 ຂະໜາດເຖົ້າ ອັບຣາຮາມ ພໍ່ຕະກູນຂອງຄົນພວກເຮົາ ບໍ່ແມ່ນວ່າ ລາວ ເປັນ
ຄົນຊອບທຳດີພ້ອມ *ຕໍ່ພຣະເຈົ້າ* ຕອນ ລາວ ຖວາຍ ອີຊາກ ລູກຊາຍຂອງ ລາວ
ເທິງແທ່ນບູຊາ ຊັ້ນບໍ້
2:22 ເຈົ້າໄດ້ເຫັນບໍ້ວ່າ ຄວາມເຊື່ອຂອງ ລາວ ໄດ້ບັນລຸຜົນບັດປະສານກັນກັບການ
ເຮັດ ຄືຄວາມເຊື່ອນັ້ນເຖິງທີ່ສົມບູນແບບໂດຍທາງການເຮັດນັ້ນ
2:23 ແລ້ວ ພຣະຄຳ ກໍເຖິງທີ່ສຳເລັດທີ່ວ່າ " *ອັບຣາຮາມ* ໄດ້ເຊື່ອພຣະເຈົ້າ ແລ້ວ
ເພິ່ນນັບວ່າຄວາມເຊື່ອນັ້ນ ເຮັດໃຫ້ *ລາວ* ເປັນຄົນຊອບທຳຖືກຕ້ອງແລ້ວ" ລາວ
ຈັ່ງມີຊື່ວ່າ ເປັນໝູ່ຂອງພຣະເຈົ້າ
2:24 ບັດນີ້ເຈົ້າເຫັນໄດ້ວ່າ ຜູ້ໃດຜູ້ໜຶ່ງເປັນຄົນຊອບທຳໄດ້ໂດຍການເຮັດນຳ ບໍ່
ແມ່ນດ້ວຍຄວາມເຊື່ອພຽງແນວດຽວ

2:25 ຄືກັນກັບທີ່ ນາງ ຣາຫັບ ຍິງຫາເງິນນັ້ນ ໄດ້ເປັນຄົນຊອບທຳດ້ວຍການເຮັດ
ຂອງເຂົາ ບໍ່ແມ່ນບໍ້ ຕອນນາງໄດ້ຮັບເອົາພວກສາຍສືບຄົນ ອິສະຣາເອນ ນັ້ນໄວ້
ແລ້ວໄດ້ສົ່ງພວກເຂົາອອກຈາກເມືອງໄປໃນທາງອື່ນ
2:26 ສະຫລຸບແລ້ວ ຮ່າງກາຍທີ່ບໍ່ມີຈິດວິນຍານສະຖິດຢູ່ນຳ ກໍຢູ່ໃນສະພາບຕາຍ
ແລ້ວ ໃນທຳນອງດຽວກັນ ຄວາມເຊື່ອທີ່ຂາດການເຮັດຕາມກໍຢູ່ໃນສະພາບຕາຍ
ຄືກັນ

## ຢາໂກໂບ ບົດທີ 3

3:1 ພີ່ນ້ອງທັງຫລາຍຂອງຂ້ອຍເອີຍ ຢ່າເປັນອາຈານກັນຫລາຍຄົນເລີຍ ຍ້ອນເຮົາ
ຮູ້ກັນວ່າ ພວກເຮົາຊິໄດ້ຮັບການພິຈາລະນາຫລາຍກວ່າຜູ້ອື່ນ
3:2 ໂດຍວ່າ ເຮົາຄູ່ຄົນເຄີຍຜິດພາດໃນຫລາຍແນວ ຄັນຜູ້ໃດບໍ່ຜິດພາດໃນທາງ
ຄວາມເວົ້າຄວາມຈາ ຜູ້ນັ້ນເປັນຄົນດີພ້ອມ ສາມາດຄວບຄຸມທັງໂຕໄວ້ໄດ້ນຳ
3:3 ນີ້ແຫລະ ຄົນເຮົາເອົາເຫລັກບັງຫຽນໃສ່ປາກມ້າ ເພື່ອໃຫ້ມັນເຊື່ອຟັງເຮົາ ຈັ່ງ
ສາມາດບັງຄັບມັນທັງໂຕ ໃຫ້ລ້ຽວໄປທາງໃດກໍໄດ້
3:4 ໃຫ້ພິຈາລະນາເຮືອ ເຖິງແມ່ນວ່າເປັນເຮືອລຳໃຫຍ່ ແລ້ວຖືກລົມແຮງພັດແລ່ນ
ໄປ ມັນກໍຍັງລ້ຽວໄປມາດ້ວຍຫາງເສືອນ້ອຍໆ ຕາມທີ່ນາຍທ້າຍຢາກໃຫ້ມັນໄປ
3:5 ຈັ່ງຊັ້ນເນາະ ລີ້ນຄົນເຮົາກໍເປັນອະໄວຍະວະນ້ອຍໆ ກໍຍັງອວດອ້າງໃຫຍ່ໂຕ
ນີ້ແຫລະ ໄຟນ້ອຍໜຶ່ງສາມາດຈຸດເຜົາປ່າໃຫຍ່ໄດ້
3:6 ແລ້ວລີ້ນຂອງຄົນເຮົາເປັນຄືໄຟ ເຕັມໄປດ້ວຍການຊົ່ວຊ້າເລວຊາມ ແລ້ວລີ້ນ
ນັ້ນກໍຢູ່ໃນໂຕຂອງເຮົາ ເປັນເຫດໃຫ້ທັງໂຕກາຍເປັນມົນທິນ ຈັ່ງລ່າມໄປຕາມ
ຫົນທາງຊີວິດ ແລ້ວນະລົກເປັນແຫລ່ງກຳເນີດຂອງໄຟນັ້ນ
3:7 ສັດຄູ່ແນວ ບໍ່ວ່າຊິເປັນສັດບ້ານ ສັດປ່າ ນົກ ງູ ກັບສັດທະເລ ສາມາດເຮັດໃຫ້ຮູ້
ໃຫ້ເຊື່ອງໄດ້ ແລ້ວຄົນເຮົາກໍເຄີຍລ້ຽງມັນໃຫ້ຮູ້ມາແລ້ວ
3:8 ແຕ່ລີ້ນຂອງຄົນເຮົານັ້ນ ບໍ່ມີໃຜເຄີຍລ້ຽງໃຫ້ຮູ້ໃຫ້ເຊື່ອງໄດ້ ມັນເປັນຄວາມຊົ່ວ
ທີ່ຄວບຄຸມຫ້າມໄວ້ບໍ່ໄດ້ເລີຍ ເຕັມໄປດ້ວຍພິດຮ້າຍອັນຕະລາຍເຖິງຕາຍ

³:⁹ ຄືໂດຍລີ້ນນັ້ນ ພວກເຮົາສັນລະເສີນພຣະເຈົ້າຜູ້ເປັນພໍ່ ແລ້ວດ້ວຍລີ້ນອັນດຽວ
ກັນນັ້ນກໍກັບມາແຊ່ງດ່າຄົນ ຊຶ່ງພຣະເຈົ້າໄດ້ສ້າງໄວ້ຄ້າຍໆ ກັບພາບລັກຂອງ
ເພິ່ນ
3:10 ຄື ຄຳສັນລະເສີນກັບຄຳສາບແຊ່ງ ກໍໄດ້ອອກມາຈາກປາກດຽວກັນ ພີ່ນ້ອງ
ທັງຫລາຍຂອງຂ້ອຍເອີຍ ມັນບໍ່ຄວນຊິເປັນແນວນັ້ນເລີຍ
3:11 ເປັນໄປໄດ້ບໍ້ ທີ່ບໍ່ນ້ຳພຸຊິມີນ້ຳຫວານກັບນ້ຳຂົມໆ ພຸ່ງອອກມາຈາກບໍ່ດຽວກັນ
3:12 ພີ່ນ້ອງຂອງຂ້ອຍເອີຍ ຕົ້ນໝາກເດື່ອຊິອອກຜົນເປັນໝາກກອກເທດໄດ້ບໍ້ ຫລື
ເຄືອອະງຸ່ນຊິອອກຜົນເປັນໝາກເດື່ອໄດ້ບໍ້ ໃນທຳນອງດຽວກັນບໍ່ມີບໍ່ນ້ຳພຸໜ້ອງ
ໃດຊິອອກທັງນ້ຳເຄັມກັບຫວານໄດ້
3:13 ຜູ້ໃດໃນພວກເຈົ້າມີປັນຍາມີຄວາມຮູ້ ກໍໃຫ້ຜູ້ນັ້ນສະແດງພຶດຕິກຳອັນດີງາມ
ປະກອບການງານດ້ວຍປັນຍາຈາກໃຈອ່ອນສຸພາບ
3:14 ແຕ່ວ່າ ຄັນພວກເຈົ້າມີຄວາມອິດສາ ຄວາມຂົມຂື່ນມີໃຈແກ່ງແຍ່ງຊິງດີກັນ ກໍ
ຢ່າອວດດີເດີ້ ກັບຢ່າຕົວະໂຕເອງໃນການຕໍ່ຕ້ານຄວາມຈິງເລີຍ
3:15 ຄືປັນຍາແນວນີ້ບໍ່ໄດ້ມາຈາກສະຫວັນຢູ່ທາງເທິງ ແຕ່ເປັນປັນຍາຕ່ຳໆ ຈາກ
ໂລກີລັກສະນະນີ້ ຈາກຕັນຫາຂອງເນື້ອໜັງ ກັບຈາກ ພະຍາມານ ຮ້າຍ
3:16 ຍ້ອນວ່າ ໜ້ອງໃດທີ່ມີຄວາມອິດສາ ກັບການແກ່ງແຍ່ງຊິງດີກັນຢູ່ໃສ ໜ້ອງ
ນັ້ນກໍມີແຕ່ຄວາມສາລະວົນວຸ້ນວາຍ ກັບແນວຊົ່ວຊ້າເລວຊາມຄູ່ອັນຄູ່ແນວເລີຍ
3:17 ແຕ່ປັນຍາຈາກສະຫວັນນັ້ນ ອັນແຮກກໍມີຄວາມບໍລິສຸດ ແລ້ວຈັ່ງມີຄວາມສະ-
ຫງົບສຸກ ມີຄວາມສຸພາບ ມີການວ່າກັນງ່າຍ ເຕັມລົ້ນດ້ວຍຄວາມເມດຕາ ກັບຜົນ
ອັນດີງາມ ໂດຍບໍ່ມີການລຳອຽງ ຫລືການໜ້າຊື່ໃຈຄົດເລີຍ
3:18 ບັດນີ້ ຜົນແຫ່ງຄວາມຊອບທຳນັ້ນ ໄດ້ຫວ່ານໄວ້ດ້ວຍຄວາມຫວັງດີດ້ວຍຄົນທີ່
ມັກສ້າງສັນຕິພາບ

## ຢາໂກໂບ ບົດທີ 4

4:1 ການສົງຄາມກັບການທະເລາະວິວາດກັນຢູ່ໃນພວກເຈົ້າມາແຕ່ໃສ ບໍ່ແມ່ນມັນ
ມາຈາກຕັນຫາແຫ່ງເພດຂອງພວກເຈົ້າບໍ້ ທີ່ຕໍ່ສູ້ກັນໃນໝູ່ສະມາຊິກຂອງພວກ
ເຈົ້າ

4:2 ພວກເຈົ້າມີຄວາມຢາກໄດ້ ແຕ່ບໍ່ໄດ້ຮັບ ກໍເລີຍຂ້າຟັນກັນຍ້ອນຄວາມໂລບ ແຕ່
ຍັງບໍ່ໄດ້ເລີຍ ພວກເຈົ້າກໍເລີຍຕໍ່ສູ້ເຮັດສົງຄາມກັນ ກໍຍັງບໍ່ໄດ້ອີກ ຍ້ອນພວກເຈົ້າບໍ່
ໄດ້ອະທິຖານວອນຂໍ
4:3 ບັດພວກເຈົ້າວອນຂໍ ກໍບໍ່ໄດ້ຮັບຄືເກົ່າ ຍ້ອນເຈົ້າຂໍຜິດ ມຸ້ງຫວັງຢາກໄດ້ເພື່ອ
ສະໜອງຕັນຫາແຫ່ງເພດຂອງໂຕເອງ
4:4 ໂອ້ ພວກເຈົ້າຊູ້ຜູ້ຊາຍຍິງທັງຫລາຍເອີຍ ພວກເຈົ້າບໍ່ຮູ້ບໍ້ວ່າ ການເປັນມິດກັບ
ໂລກນີ້ ເຮັດໃຫ້ເປັນສັດຕູກັບພຣະເຈົ້າ ຈັ່ງຊັ້ນ ຜູ້ໃດມັກເປັນມິດກັບໂລກ ຜູ້ນັ້ນກໍ
ເຮັດໃຫ້ໂຕເອງເປັນສັດຕູກັບພຣະເຈົ້າ
4:5 ຫລືວ່າ ພວກເຈົ້າຄຶດວ່າ ພຣະຄຳ ກ່າວໄວ້ຢ່າງບໍ່ມີປະໂຫຍດບໍ້ ທີ່ວ່າ “*ພຣະ-
ວິນຍານ* ທີ່ສະຖິດຢູ່ໃນພວກຄົນເຮົາກໍຫວງແຫນ ມີຄວາມຮັກຫລາຍຕໍ່ພວກເຮົາ”
4:6 ແຕ່ພຣະເຈົ້າຈັ່ງປະທານພຣະຄຸນເພີ່ມໃຫ້ອີກ ຈັ່ງຊັ້ນ ຜູ້ນັ້ນຈັ່ງເວົ້າວ່າ “ພຣະ-
ເຈົ້າຕໍ່ສູ້ຜູ້ເຫຍີ້ອຫຍິ່ງຈອງຫອງ ແຕ່ໄດ້ປະທານພຣະຄຸນໃຫ້ຜູ້ທີ່ມີໃຈຖ່ອມ”
4:7 ຈັ່ງຊັ້ນ ໃຫ້ຍອມຢູ່ໃຕ້ພຣະເຈົ້າ ໃຫ້ຕໍ່ຕ້ານພະຍາມານຊາຕານເດີ້ ແລ້ວມັນຊິ
ໜີຈາກເຈົ້າໄປ
4:8 ໃຫ້ເຂົ້າໃກ້ຊິດກັບພຣະເຈົ້າເດີ້ ແລ້ວເພິ່ນຊິເຂົ້າໃກ້ຊິດກັບເຈົ້າ ໂອ້ ຄົນບາບ
ທັງຫລາຍເອີຍ ໃຫ້ຂັດລ້າງມືຂອງເຈົ້າໃຫ້ສະອາດເດີ້ ແລ້ວເຈົ້າຜູ້ສອງຈິດສອງໃຈ
ເອີຍ ໃຫ້ຊຳລະຈິດໃຈຂອງໂຕໃຫ້ບໍລິສຸດເດີ້
4:9 ໃຫ້ໂສກເສົ້າເປັນທຸກເດີ້ ກັບໃຫ້ຮ້ອງໄຫ້ເສຍໃຈເດີ້ ຄືໃຫ້ສຽງຫົວຂອງເຈົ້າ
ກາຍເປັນສຽງໂສກເສົ້າຮ້ອງໄຫ້ເດີ້ ກັບໃຫ້ຄວາມດີອົກດີໃຈຂອງເຈົ້າກາຍເປັນ
ຄວາມໜັກອົກໜັກໃຈເດີ້
4:10 ຄືໃຫ້ພວກເຈົ້າຖ່ອມໂຕຖ່ອມໃຈລົງ ຕໍ່ໜ້າອົງພຣະຜູ້ເປັນເຈົ້າເດີ້ ແລ້ວເພິ່ນຊິ
ຍົກຊູເຈົ້າຂຶ້ນ
4:11 ພີ່ນ້ອງທັງຫລາຍເອີຍ ຢ່າເວົ້າໃສ່ຮ້າຍຕໍ່ກັນແລະກັນເລີຍເດີ້ ຄືຜູ້ທີ່ເວົ້າໃສ່-
ຮ້າຍຕັດສິນພີ່ນ້ອງຂອງໂຕນັ້ນ ກໍໄດ້ເວົ້າໃສ່ຮ້າຍຕັດສິນກົດບັນຍັດ ແລ້ວຄັ່ນເຈົ້າ
ຕັດສິນກົດບັນຍັດນັ້ນ ເຈົ້າບໍ່ແມ່ນຄົນເຮັດຕາມກົດບັນຍັດອີກຕໍ່ໄປ ແຕ່ກາຍເປັນ
ຜູ້ພິພາກສານັ້ນຊ້ຳ

4:12 ຄື ມີແຕ່ຜູ້ດຽວທີ່ອອກກົດບັນຍັດນັ້ນ ແມ່ນຜູ້ດຽວກັນທີ່ສາມາດຊ່ອຍກອບກູ້
ໃຫ້ລອດໄດ້ ຫລືສາມາດສົ່ງໄປສູ່ຄວາມພິນາດກໍໄດ້ ແຕ່ສຳລັບເຈົ້າ ແມ່ນຜູ້ດີມາ
ແຕ່ໃສເນາະ ຈັ່ງມີສິດຕັດສິນຜູ້ອື່ນ
4:13 ນີ້ແຫລະ ເຈົ້າຜູ້ທີ່ເວົ້າວ່າ "ມື້ນີ້ຫລືມື້ອື່ນເຮົາຊິເຂົ້າໄປໃນເມືອງນັ້ນເມືອງນີ້
ກັບຊິຢູ່ໝ້ອງນັ້ນປີໜຶ່ງ ແລ້ວຊິຄ້າຂາຍໄດ້ກຳໄລ"
4:14 ແຕ່ວ່າ ພວກເຈົ້າບໍ່ຮູ້ບໍ້ວ່າ ໃນມື້ອື່ນນັ້ນ ອາດ ຊິມີເຫດອິຫຍັງເກີດຂຶ້ນ ຄື ຊີວິດ
ຂອງເຈົ້າເປັນອິຫຍັງແໜ່ ມັນກໍເປັນຄືໝອກທີ່ເຫັນຢູ່ແຕ່ບຶດດຽວໜຶ່ງ ແລ້ວມັນກໍຊິ
ຫາຍແວບໄປ
4:15 ແຕ່ວ່າ ພວກເຈົ້າຄວນຊິກັບເວົ້າວ່າ "ຄັ່ນອົງພຣະຜູ້ເປັນເຈົ້າຊິໄດ້ກະລຸນາ ຜູ້-
ຂ້າຊິມີຊີວິດຢູ່ຕໍ່ ກັບຊິເຮັດແນວນີ້ຫລືແນວນັ້ນ"
4:16 ແຕ່ໃນບັດນີ້ ການໂອ້ອວດຂອງພວກເຈົ້າແນວນີ້ເປັນການຈອງຫອງ ຊຶ່ງການ
ໂອ້ອວດຈັ່ງຊັ້ນເປັນຄວາມຊົ່ວທັງໝົດ
4:17 ຈັ່ງຊັ້ນ ຜູ້ໃດຮູ້ຈັກເຮັດການດີ ແຕ່ກັບບໍ່ໄດ້ເຮັດ ມັນເປັນບາບສຳລັບເຂົາ

## ຢາໂກໂບ ບົດທີ 5

5:1 ນີ້ແຫລະ ລະວັງເດີ້ ເຈົ້າຜູ້ຮັ່ງມີ ໃຫ້ຮ້ອງໄຫ້ຄາງເດີ້ ຍ້ອນຄວາມທຸກທີ່ຊິເຂົ້າ
ມາສູ່ຊີວິດເຈົ້າ
5:2 ຊັບສົມບັດຂອງເຈົ້າ ມັນກໍຜຸພັງ ແລ້ວມອດມັນກໍກັດກິນເສື້ອຜ້າໜ້າແພຂອງ
ເຈົ້ານຳ
5:3 ເງິນທອງຂອງເຈົ້າໄດ້ເຂົ້າຂີ້ເຫືອແລ້ວ ແລ້ວຂີ້ເຫືອນັ້ນຊິເປັນຫຼັກຖານພະຍານ
ຟ້ອງຮ້ອງເຈົ້າ ກັບມັນຊິກິນເນື້ອໜັງຂອງໂຕເຈົ້າຄືໄຟ ແມ່ນກໍລ່ອງສົມບັດນັ້ນ ທີ່
ເຈົ້າໄດ້ມ້ຽນເອົາໄວ້ເພື່ອຍາມເວລາສຸດທ້າຍ
5:4 ນີ້ແຫລະ ຄ່າຈ້າງຂອງຄົນງານທີ່ໄດ້ກ່ຽວເຂົ້າໃນນາຂອງເຈົ້າ ຊຶ່ງເຈົ້າໄດ້ໂກງ
ເງິນເຂົາເອົາໄວ້ນັ້ນ ກໍຮ້ອງຟ້ອງຂຶ້ນມາ ແລ້ວສຽງຮ້ອງຂອງຄົນງານທີ່ກ່ຽວເຂົ້າ
ຂອງເຈົ້ານັ້ນ ໄດ້ຊອດຫູຂອງອົງພຣະຜູ້ເປັນເຈົ້າແລ້ວ ແມ່ນຜູ້ບັນຊາການຈອມ
ໂຍທາສູງສຸດ

5:5 ພວກເຈົ້າໄດ້ໃຊ້ຊີວິດຢູ່ໃນໂລກນີ້ຢ່າງສະໜຸກສະໜານມົວເມົາ ມົວແຕ່ເອົາໃຈ
ໃສ່ໃຫ້ອີ່ມໜຳສຸກສະບາຍ ພໍຄືສັດພັນເນື້ອ ຄອຍຖ້າມື້ທີ່ຊິຖືກຂ້າ
5:6 ເຈົ້າເຄີຍຕັດສິນລົງໂທດຄົນຜູ້ຊອບທຳ ເຄີຍຂ້າເຂົານຳ ແລ້ວພວກເຂົາກໍບໍ່ໄດ້
ຕໍ່ຕ້ານເຈົ້າເລີຍ
5:7 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ໃຫ້ອົດທົນຄອຍຖ້າອົງພຣະຜູ້ເປັນເຈົ້າລົງມາອີກ
ເດີ້ ນີ້ແຫລະ ໃຫ້ຄອຍຖ້າສັງເກດຊາວໄຮ່ຊາວນາເດີ້ ພວກເຂົາຄອຍຖ້າຍາມ
ເກັບກ່ຽວຜົນດີງາມຈາກແຜ່ນດິນ ຄອຍຖ້າຈົນກວ່າຝົນຕົ້ນປີ ກັບຝົນປາຍປີ
5:8 ຈັ່ງຊັ້ນ ໃຫ້ພວກເຈົ້າອົດທົນຄອຍຖ້າຄືກັນເດີ້ ຕັ້ງອົກຕັ້ງໃຈໃຫ້ດີເດີ້ ດ້ວຍວ່າ
ການມາຂອງອົງພຣະຜູ້ເປັນເຈົ້ານັ້ນ ໃກ້ຊິມາຮອດແລ້ວ
5:9 ພີ່ນ້ອງທັງຫລາຍເອີຍ ຢ່າໂຈມຕີຕໍ່ວ່າກັນແລະກັນເດີ້ ບໍ່ຊັ້ນ ຢ້ານວ່າເຈົ້າ ອາດ
ຊິຖືກເພິ່ນພິຈາລະນາຕັດສິນ ນີ້ແຫລະ ຜູ້ພິພາກສາອັນໃຫຍ່ຫລວງ ຢືນຢູ່ໜ້າ
ປະຕູແລ້ວ
5:10 ພີ່ນ້ອງທັງຫລາຍຂອງຂ້ອຍເອີຍ ໃຫ້ເອົາພວກຜູ້ເປັນປາກເປັນສຽງເປັນແບບ
ຢ່າງ ໃນການທົນທຸກກັບການອົດທົນ ແມ່ນຜູ້ທີ່ກ່າວໃນພຣະນາມຂອງອົງພຣະຜູ້-
ເປັນເຈົ້າ
5:11 ນີ້ແຫລະ ເຮົາຖືວ່າ ຜູ້ທີ່ອົດທົນໄດ້ນານກໍໄດ້ພົບເປັນສຸກ ພວກເຈົ້າເຄີຍໄດ້ຍິນ
ເລື່ອງຄວາມອົດທົນພາກພຽນຂອງທ້າວ ໂຢບ ຄືໃນສຸດທ້າຍ ອົງພຣະຜູ້ເປັນເຈົ້າ
ໄດ້ສະແດງຄວາມເມດຕາກັບຄວາມປານີຕໍ່ ລາວ ຢ່າງຫລາຍ
5:12 ພີ່ນ້ອງທັງຫລາຍຂອງຂ້ອຍເອີຍ ທີ່ສຳຄັນກວ່າແນວອື່ນ ກໍຄື ຢ່າສາບານເດີ້ ບໍ່
ວ່າຊິສາບານໂດຍອ້າງຟ້າສະຫວັນຫລືອ້າງແຜ່ນດິນໂລກ ບໍ່ວ່າຊິເປັນຄຳສາບານ
ອື່ນໃດກໍຕາມ ກໍບໍ່ຄວນເລີຍ ແຕ່ວ່າ ຄັນແມ່ນກໍໃຫ້ວ່າ ແມ່ນ ໂລດ ແລ້ວຄັນບໍ່
ແມ່ນກໍໃຫ້ວ່າບໍ່ແມ່ນ ໂລດ ບໍ່ຊັ້ນ ຢ້ານວ່າ ເຈົ້າ ອາດ ຊິຖືກເພິ່ນພິຈາລະນາຕັດ-
ສິນ
5:13 ມີຜູ້ໃດໃນພວກເຈົ້າເປັນທຸກເປັນຮ້ອນບໍ້ ກໍໃຫ້ຜູ້ນັ້ນອະທິຖານ ໂລດ ເດີ້ ມີຜູ້-
ໃດລ່າເລີງຍິນດີບໍ້ ກໍໃຫ້ຜູ້ນັ້ນຮ້ອງ ເພງສັນລະເສີນ ສັນລະເສີນພຣະເຈົ້ານຳເດີ້

5:14 ມີຜູ້ໃດໃນພວກເຈົ້າເປັນເຈັບເປັນໄຂ້ບໍ ກໍໃຫ້ຜູ້ນັ້ນເອີ້ນພວກຜູ້ຫລັກຜູ້ໃຫຍ່ທີ່
ເບິ່ງແຍງກຸ່ມຜູ້ເຊື່ອມາເດີ້ ແລ້ວໃຫ້ພວກເຂົາອະທິຖານເພື່ອເດີ້ ເຈີມຜູ້ເຈັບໄຂ້ນັ້ນ
ດ້ວຍນໍ້າມັນໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ
5:15 ຄື ການອະທິຖານເວົ້ານໍາພຣະເຈົ້າດ້ວຍຄວາມເຊື່ອຊິຊ່ອຍຜູ້ເຈັບໄຂ້ໃຫ້ພົ້ນ
ນັ້ນ ແລ້ວອົງພຣະຜູ້ເປັນເຈົ້າກໍຊິໂຜດໃຫ້ເຂົາເຊົາເປັນດີຄືເກົ່າ ກັບຄັ່ນເຂົາໄດ້
ເຮັດບາບ *ເປັນເຫດ* ເຂົາກໍຊິໄດ້ຮັບການອະໄພ
5:16 ໃຫ້ພວກເຈົ້າສາລະພາບຄວາມຜິດບາບຕໍ່ກັນແລະກັນເດີ້ ກັບໃຫ້ອະທິຖານ
ເພື່ອກັນແລະກັນນໍາເດີ້ ກໍເພື່ອພວກເຈົ້າຊິໄດ້ຫາຍໂລກໄພໄຂ້ເຈັບ ຄືຄໍາອະທິ-
ຖານທີ່ອອກຈາກໃຈຈິງຂອງຜູ້ຊອບທໍານັ້ນ ມີອິດທິພົນຫລາຍໃນການເກີດຜົນ
5:17 ທ້າວ ເອລີຢາ ກໍເປັນທໍາຊາດມະນຸດຄືກັນກັບພວກເຮົາ ແລ້ວ ລາວ ໄດ້ອະທິ-
ຖານຂໍຕໍ່ພຣະເຈົ້າຢ່າງຈິງຈັງບໍ່ໃຫ້ຝົນຕົກ ແລ້ວຝົນກໍບໍ່ໄດ້ຕົກໃສ່ແຜ່ນດິນເປັນ
ເວລາຮອດສາມປີຫົກເດືອນເຕັມ
5:18 ກັບ ລາວ ໄດ້ອະທິຖານຂໍຕໍ່ພຣະເຈົ້າອີກເທື່ອໜຶ່ງ ແລ້ວຝົນຈັ່ງຕົກລົງມາຈາກ
ຟ້າສະຫວັນອີກ ແຜ່ນດິນໂລກຈັ່ງໄດ້ອອກດອກເກີດຜົນຄືເກົ່າ
5:19 ພີ່ນ້ອງທັງຫລາຍເອີຍ ຄັ່ນຄົນໃດໃນພວກເຈົ້າຫລົງຜິດໄປຈາກທາງຄວາມຈິງ
ແລ້ວອີກຜູ້ໜຶ່ງຊ່ອຍຊັກຈູງໃຫ້ເຂົາຫັນກັບມາອີກ
5:20 ກໍໃຫ້ເຂົາ ຜູ້ທີ່ຊ່ອຍຄົນບາບໃຫ້ຫັນກັບມາຈາກທາງຜິດຂອງເຂົາ ຮູ້ໄວ້ວ່າ ໄດ້
ຊ່ອຍຊີວິດຄົນໃຫ້ລອດພົ້ນຈາກຕາຍ ກັບໄດ້ປົກປິດການບາບໄວ້ຢ່າງຫລາຍແລ້ວ

# 1 ເປໂຕ

## 1 ເປໂຕ ບົດທີ 1

1:1 ຈາກ ເປໂຕ ຜູ້ເປັນທູດພິເສດຂອງ ພຣະເຢຊູຄຣິດ ຂຽນເຖິງຄົນຂອງພຣະເຈົ້າ
ທີ່ຖືກກະຈັກກະຈາຍພະເນຈອນອອກໄປ ຈັ່ງ ອົບພະຍົບ ໄປຢູ່ແຄວ້ນ ປົນໂຕ
ແຄວ້ນ ຄາລາເຕຍ ແຄວ້ນ ກາປາໂດເກຍ ແຄວ້ນ ເອເຊຍ ກັບແຄວ້ນ ບິທີເນຍ
1:2 ແມ່ນຜູ້ຄົນທີ່ພຣະເຈົ້າໄດ້ເລືອກໄວ້ ຕາມແຜນງານຂອງເພິ່ນຜູ້ເປັນພໍ່ ທີ່ເພິ່ນມີ
ໄວ້ມາກ່ອນ ໃຫ້ເປັນຄົນບໍລິສຸດສະເພາະເພິ່ນໂດຍທາງ ພຣະວິນຍານ ໂດຍການ

ເຊື່ອຟັງ *ຂ່າວປະເສີດ* ຈັ່ງໄດ້ຮັບການຊຳລະໃຫ້ເປັນຜູ້ບໍລິສຸດໂດຍພຣະໂລຫິດ-
ຂອງພຣະເຢຊູຄຣິດ ຈັ່ງຂໍໃຫ້ພຣະກະລຸນາທິຄຸນ ກັບຄວາມສະຫງົບສຸກມີແດ່
ພວກເຈົ້າທັງຫລາຍເຖີ້ນ
1:3 ສາທຸການພຣະເຈົ້າ ພໍ່ຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ ຕາມຄວາມ
ເມດຕາກະລຸນາອັນເຫລືອລົ້ນຢ່າງຫລາຍຂອງເພິ່ນ ເພິ່ນຈັ່ງໂປດບັນດານໃຫ້ເຮົາ
ທັງຫລາຍບັງເກີດໃໝ່ ເຂົ້າສູ່ຊີວິດໃໝ່ທີ່ເຕັມໄປດ້ວຍຄວາມຫວັງອັນໝັ້ນຄົງ
ຍ້ອນການເປັນຂຶ້ນມາຈາກຕາຍຂອງ ພຣະເຢຊູຄຣິດ
1:4 ເຖິງມີມໍລະດົກທີ່ບໍ່ຮູ້ຈັກເປື່ອຍເນົ່າ ອັນບໍ່ມີຕຳນີ້ມົນທິນໃດໆ ທີ່ຊິບໍ່ສູນເສຍ-
ຫາຍໄປຈັກເທື່ອ ຊຶ່ງພຣະເຈົ້າໄດ້ຈັດກຽມໄວ້ໃຫ້ພວກເຈົ້າໃນສະຫວັນແລ້ວ
1:5 ຊຶ່ງແມ່ນພຣະເຈົ້າເອງທີ່ປົກປ້ອງຮັກສາພວກເຈົ້າໄວ້ ໂດຍລິດອານຸພາບຂອງ
ເພິ່ນທາງຄວາມເຊື່ອຂອງພວກເຈົ້າ ເພື່ອບັນລຸເຖິງຄວາມລອດພົ້ນທີ່ຊິປາກົດໃນ
ຍຸກສຸດທ້າຍ
1:6 ແລ້ວໃນນີ້ ພວກເຈົ້າມີຄວາມຊົມຊື່ນຍິນດີຫລາຍເປັນຢ່າງຍິ່ງ ເຖິງແມ່ນວ່າໃນ
ຍາມນີ້ ລາງເທື່ອຈຳເປັນພວກເຈົ້າຊິຕ້ອງທົນເອົາດ້ວຍຄວາມໜັກໃຈຈັກໜ່ອຍ
ຍ້ອນການທົດລອງຕ່າງໆ
1:7 ກໍເພື່ອຄວາມເຊື່ອອັນແທ້ຈິງຂອງພວກເຈົ້ານັ້ນ ທີ່ປະເສີດກວ່າທອງຄຳທີ່ສາບ-
ສູນໄປ ຊິໄດ້ຮັບການພິສູດດ້ວຍການເຜົາໄຟ ເພື່ອປາກົດວ່າ ຊິເປັນທີ່ຍົກຍ້ອງ
ສັນລະເສີນ ຖວາຍກຽດ ກັບສະຫງ່າລາສີ ໃນຍາມທີ່ ພຣະເຢຊູຄຣິດ ຊິສະເດັດມາ
ປາກົດພຣະອົງ
1:8 ຊຶ່ງໃນຍາມນີ້ພວກເຈົ້າຍັງບໍ່ທັນເຫັນເພິ່ນ ແຕ່ຍັງຮັກແພງຢູ່ ແລ້ວເຖິງແມ່ນວ່າ
ຍັງບໍ່ທັນເຫັນ ກໍຍັງເຊື່ອໝັ້ນຢູ່ ຈັ່ງມີຄວາມປິຕິຍິນດີເຫລືອທີ່ຊິອະທິບາຍໄດ້ ອັນ
ເຕັມໄປດ້ວຍສະຫງ່າງາມ
1:9 ຊຶ່ງຈຸດປາຍທາງຂອງຄວາມເຊື່ອພວກເຈົ້ານັ້ນ ເປັນຄວາມລອດພົ້ນຂອງຈິດ-
ວິນຍານຂອງພວກເຈົ້າ

1:10 ສ່ວນຄວາມລອດພົ້ນນັ້ນ ພວກຜູ້ເປັນປາກເປັນສຽງ *ໃນສະໄໝກ່ອນ* ໄດ້ໃສ່
ໃຈໃນການຄົ້ນຫາ ໂດຍຄວາມພະຍາຍາມ ຈັ່ງໄດ້ກ່າວເຖິງພຣະກະລຸນາທິຄຸນ
ນັ້ນ ທີ່ຊິມາເຖິງພວກເຈົ້າ
1:11 ຈັ່ງຄົ້ນຫາເຖິງທາງໃດກັບຍາມໃດທີ່ ພຣະວິນຍານ ແຫ່ງ ພຣະຄຣິດ ຊຶ່ງສະ-
ຖິດຢູ່ໃນພວກເຂົາ ໄດ້ບົ່ງບອກໄວ້ລ່ວງໜ້າເຖິງຄວາມທຸກທໍລະມານຂອງ ພຣະ-
ຄຣິດ ກັບເຖິງຄວາມສະຫງ່າທີ່ຊິມາໃນພາຍຫລັງ
1:12 ແລ້ວໄດ້ເປີດເຜີຍໃຫ້ພວກຜູ້ເປັນປາກເປັນສຽງ *ໃນສະໄໝກ່ອນ* ວ່າ ແນວທີ່
ພວກເຂົາໄດ້ກ່າວເຖິງນັ້ນ ກໍບໍ່ໄດ້ກ່າວເພື່ອໂຕເຂົາເອງ ແຕ່ໄດ້ກ່າວເພື່ອພວກເຮົາ
*ໃນສະໄໝນີ້* ເຖິງເລື່ອງຂ່າວປະເສີດນັ້ນທີ່ໄດ້ປະກາດໃຫ້ພວກເຈົ້າຟັງ ໂດຍການ
ຊົງນຳຂອງ ພຣະວິນຍານ ທີ່ມາຈາກສະຫວັນ ຊຶ່ງແມ່ນແຕ່ພວກເທວະທູດປາດ-
ຖະໜາຢາກຮູ້ຢາກເຫັນນັ້ນນຳ
1:13 ຈັ່ງຊັ້ນ ໃຫ້ກຽມຈິດໃຈໄວ້ໃຫ້ພ້ອມເດີ້ ມີສະຕິອ້ອມຄອບ ມີຄວາມຫວັງອັນ
ໝັ້ນຄົງ ໂດຍພຣະກະລຸນາທິຄຸນ ຊຶ່ງຄວາມຫວັງນັ້ນຊິໄດ້ບັນລຸຜົນໃຫ້ພວກເຈົ້າ
ເຫັນ ບັດ ພຣະເຢຊູຄຣິດ ສະເດັດມາປາກົດພຣະອົງເອງ
1:14 ແລ້ວໃນຖານະເປັນລູກຕົວຢ່າງທີ່ຮູ້ຈັກເຊື່ອຟັງ ຢ່າໄດ້ລົງລອຍເຮັດຕາມ
ຄວາມຢາກຄວາມໄຄ່ແນວເກົ່າທີ່ພວກເຈົ້າເຄີຍເຮັດມາກ່ອນຕອນທີ່ຍັງໃຊ້ຊີວິດ
ຢູ່ໃນຄວາມໂງ່ນັ້ນ
1:15 ໂດຍວ່າ ເພິ່ນຜູ້ທີ່ໄດ້ເອີ້ນໄດ້ເຊີນພວກເຈົ້ານັ້ນ ເປັນຜູ້ບໍລິສຸດສໍ່າໃດ ກໍໃຫ້
ພວກເຈົ້າເປັນຜູ້ບໍລິສຸດສໍ່ານັ້ນ ໃນການດຳເນີນຊີວິດໝົດຄູ່ຢ່າງ
1:16 ຍ້ອນມີ ພຣະຄຳ ຂຽນວ່າ “ໃຫ້ເປັນຄົນບໍລິສຸດເດີ້ ຍ້ອນວ່າເຮົາເປັນຜູ້ບໍລິສຸດ”
1:17 ໂດຍວ່າ ຄັ່ນພວກເຈົ້າອະທິຖານວອນຂໍຕໍ່ພຣະເຈົ້າຜູ້ເປັນພໍ່ ຜູ້ທີ່ພິພາກສາ
ຜົນງານຂອງແຕ່ລະຄົນ ໂດຍບໍ່ມີການລຳອຽງ ກໍຂໍໃຊ້ຊີວິດຂອງໂຕເອງດ້ວຍ
ຄວາມເຄົາລົບເຄົາລົບຕອນຢູ່ໃນໂລກນີ້
1:18 ໂດຍຮູ້ກັນວ່າ ພຣະເຈົ້າບໍ່ໄດ້ໄຖ່ພວກເຈົ້າ ດ້ວຍສິ່ງຂອງທີ່ເສື່ອມສະຫລາຍໄດ້
ຄືເງິນຫລືທອງ ໃຫ້ອອກຈາກການປະຕິບັດອັນຂາດສາລະນັ້ນ ຊຶ່ງພວກເຈົ້າໄດ້-
ຮັບເປັນປະເພນີຖ່າຍທອດກັນແຕ່ພໍ່ແຕ່ບັນພະບຸລຸດຂອງພວກເຈົ້າມາ

1:19 ແຕ່ໄດ້ໄຖ່ດ້ວຍພຣະໂລຫິດອັນປະເສີດຂອງ ພຣະຄຣິດ ຄືກັນກັບແກະນ້ອຍ
ທີ່ບໍ່ມີຕຳນິ້ຫລືຈຸດດ່າງພ້ອຍເລີຍ
1:20 ແທ້ຈິງແລ້ວ ພຣະຄຣິດ ໄດ້ຮັບການແຕ່ງຕັ້ງໄວ້ກ່ອນຊີສ້າງໂລກ ແຕ່ໄດ້ປາ-
ກົດພຣະອົງເອງໃນຍາມເວລາສຸດທ້າຍນີ້ເພື່ອພວກເຈົ້າ
1:21 ຊຶ່ງໂດຍທາງ ພຣະຄຣິດ ນັ້ນ ພວກເຈົ້າຈັ່ງເຊື່ອໃນພຣະເຈົ້າ ຜູ້ເພິ່ນບັນດານ
ໃຫ້ ພຣະຄຣິດ ເປັນຂຶ້ນມາຈາກຕາຍ ກັບໃຫ້ຮັບສະຫງ່າລາສີ ເພື່ອຄວາມເຊື່ອກັບ
ຄວາມຫວັງຂອງພວກເຈົ້າຊິໄດ້ຕັ້ງໝັ້ນຄົງຢູ່ໃນພຣະເຈົ້າ
1:22 ໂດຍວ່າ ບັດພວກເຈົ້າໄດ້ຊຳລະລ້າງຈິດວິນຍານຂອງໂຕແລ້ວ ດ້ວຍການ
ເຊື່ອຟັງຄວາມຈິງໃນ ພຣະວິນຍານ ດ້ວຍໃຈນົບນ້ອມ ກັບມີການຮັກແພງພວກ
ພີ່ນ້ອງຢ່າງນ້ຳໃສໃຈຈິງ ຈັ່ງຊັ້ນ ໃຫ້ພະຍາຍາມຮັກແພງກັນແລະກັນແຮງຫລາຍ
ຂຶ້ນຈາກໃຈບໍລິສຸດເດີ້
1:23 ຄືພວກເຈົ້າໄດ້ບັງເກີດໃໝ່ແລ້ວ ບໍ່ແມ່ນເກີດຈາກເຊື້ອສາຍອະນິຈັງ ທີ່ຊິ
ເປື່ອຍເນົ່າຕາຍໄປໄດ້ ແຕ່ໄດ້ເກີດໃໝ່ຈາກ ພຣະຄຳ ຂອງພຣະເຈົ້າອັນປະກອບ
ດ້ວຍຊີວິດອັນຕະຫລອດໄປເປັນນິດ ຊຶ່ງດຳລົງຢູ່ຕະຫລອດການເປັນນິດ
1:24 ຍ້ອນວ່າ "ມວນມະນຸດຄູ່ຄົນປຽບຄືຕົ້ນຫຍ້າ ກັບຄວາມສະຫງ່າງາມຂອງ
ພວກເຂົາປຽບຄືດອກຫຍ້າ ຄື ຕົ້ນຫຍ້າກໍຫ່ຽວແຫ້ງໄປ ກັບດອກຫຍ້າກໍຫາຍໄປຊື່
ໆ
1:25 *ແຕ່ ພຣະຄຳ ຂອງອົງພຣະຜູ້ເປັນເຈົ້າດຳລົງຢູ່ຕະຫລອດການເປັນນິດ"*
ແລ້ວບັດນີ້ ນີ້ກໍເປັນ ພຣະຄຳ ທີ່ມາປະກາດໃຫ້ພວກເຈົ້າຟັງ ຄືຂ່າວປະເສີດນັ້ນ
ເອງ

## 1 ເປໂຕ ບົດທີ 2

2:1 ຈັ່ງຊັ້ນ ສົມຄວນຊິວາງລົງໃຫ້ໝົດ ຄື ການປອງຮ້າຍຕ່າງໆ ການເລ້ຫລ່ຽມ
ການໜ້າຊື່ໃຈຄົດ ການອິດສາບັງບຽດຕ່າງໆ ກັບການເວົ້າສໍ່ສຽດໃສ່ຮ້າຍກັນ
2:2 ແລ້ວໃຫ້ປາດຖະໜາ ພຣະຄຳ ອັນບໍລິສຸດຂອງພຣະເຈົ້າເດີ້ ຄືເດັກນ້ອຍທີ່ເກີດ
ໃໝ່ໆ ເພື່ອພວກເຈົ້າຊິໄດ້ເຕີບໂຕຂຶ້ນ

2:3 ຄັ່ນວ່າ ພວກເຈົ້າໄດ້ຊີມລົດຊາດເບິ່ງແລ້ວ ຈັ່ງຊິຮູ້ວ່າ ອົງພຣະຜູ້ເປັນເຈົ້າມີ
ພຣະກະລຸນາອັນແສນດີ
2:4 ຈັ່ງຊັ້ນ ມາຫາເພິ່ນ ຜູ້ເປັນສິລາເລີກທີ່ປະກອບດ້ວຍຊີວິດ ທີ່ຜູ້ຄົນປະຕິເສດ
ແຕ່ເປັນທີ່ຍອມຮັບອັນປະເສີດລ້ຳຄ່າ ທີ່ພຣະເຈົ້າໄດ້ເລືອກໄວ້
2:5 ແລ້ວພວກເຈົ້າເປັນຄືສິລາທີ່ປະກອບດ້ວຍຊີວິດຄືກັນ ທີ່ພວມຖືກກໍ່ກັນຂຶ້ນ
ສ້າງໄວ້ເປັນພຣະນິເວດຝ່າຍວິນຍານ ເປັນປະໂລຫິດຝ່າຍວິນຍານ ຊຶ່ງເປັນທີ່
ຍອມຮັບສະເພາະພຣະເຈົ້າໂດຍທາງ ພຣະເຢຊູຄຣິດ
2:6 ຈັ່ງຊັ້ນ ຕາມທີ່ມີຂຽນໄວ້ໃນ ພຣະຄຳ ວ່າ “ນີ້ແຫລະ ເຮົາໄດ້ວາງສິລາເລີກກ້ອນ
ໜຶ່ງລົງໃນ ຊີໂອນ ເປັນສິລາມຸມເອກອັນສຳຄັນທີ່ເຮົາໄດ້ເລືອກໄວ້ແລ້ວ ຊຶ່ງເປັນ
ສິລາອັນປະເສີດລ້ຳຄ່າ ແລ້ວຜູ້ໃດທີ່ເຊື່ອວາງໃຈໃນເພິ່ນຜູ້ນັ້ນ ຊິບໍ່ມີການລະອາຍ
ເລີຍ”
2:7 ຈັ່ງຊັ້ນ ສຳລັບພວກເຈົ້າຜູ້ທີ່ເຊື່ອນັ້ນ ເພິ່ນກໍເປັນຜູ້ປະເສີດລ້ຳຄ່າ ແຕ່ສຳລັບຜູ້
ຄົນທີ່ບໍ່ຍອມເຊື່ອ *“ສິລາທີ່ພວກຊ່າງກໍ່ປະຕິເສດນັ້ນ ໄດ້ກັບກາຍມາເປັນສິລາມຸມ
ເອກອັນສຳຄັນແລ້ວ”*
2:8 ກັບວ່າ *“ເປັນກ້ອນຫີນທີ່ເຮັດໃຫ້ພວກເຂົາສະດຸດ ກັບເປັນຜາຫີນທີ່ເຮັດໃຫ້
ຂັດເຄືອງໃຈ”* ຄືທີ່ເຂົາສະດຸດນັ້ນຍ້ອນວ່າເຂົາບໍ່ຍອມເຊື່ອຟັງ ພຣະຄຳ ຊຶ່ງບັດນີ້
ເຂົາໄດ້ຖືກກຳນົດໄວ້ໃຫ້ຖືກປະຖິ້ມເຊັ່ນກັນ
2:9 ແຕ່ສ່ວນພວກເຈົ້ານັ້ນ ເປັນຊົນຊາດຄົນທີ່ເພິ່ນໄດ້ເລືອກໄວ້ແລ້ວ ເປັນອານາ-
ຈັກປະໂລຫິດເປັນຊົນຊາດບໍລິສຸດໄວ້ສະເພາະພຣະເຈົ້າ ເປັນຊົນຊາດພິເສດ
ຂອງເພິ່ນ ເພື່ອພວກເຈົ້າຊິໄດ້ປະກາດພຣະບາລະມີອັນດີງາມຂອງເພິ່ນ ຜູ້ເພິ່ນ
ໄດ້ເອີ້ນໄດ້ເຊີນພວກເຈົ້າ ໃຫ້ອອກຈາກຄວາມມືດ ເຂົ້າມາສູ່ແສງສະຫວ່າງອັນ
ມະຫັດສະຈັນຂອງເພິ່ນ
2:10 ຊຶ່ງແຕ່ກ່ອນ ພວກເຈົ້າບໍ່ໄດ້ເປັນຊົນຊາດເລີຍ ແຕ່ບັດນີ້ພວກເຈົ້າໄດ້ເປັນຊົນ-
ຊາດຄົນຂອງພຣະເຈົ້າແລ້ວ ກັບແຕ່ກ່ອນພວກເຈົ້າບໍ່ໄດ້ຮັບພຣະກະລຸນາ ແຕ່
ບັດນີ້ພວກເຈົ້າໄດ້ຮັບພຣະກະລຸນາແລ້ວ

2:11 ພີ່ນ້ອງທີ່ຮັກເອີຍ ເຮົາຂໍຮ້ອງໃຫ້ພວກເຈົ້າ ຄືກັນກັບພວກຄົນຕ່າງດ້າວຕົນ
ຕ່າງແດນ *ມາພະເນຈອນໃນໂລກນີ້* ໃຫ້ພວກເຈົ້າລະເວັ້ນຈາກຄວາມກະຫາຍ
ຝ່າຍເນື້ອໜັງ ຊຶ່ງມັນເປັນສັດຕູຕໍ່ສູ້ຈິດວິນຍານພວກເຈົ້າ
2:12 ແລ້ວຈັ່ງດໍາເນີນຊີວິດເປັນຄົນອ້ອມຄອບດີ ເປັນຕານັບຖືຢູ່ຕໍ່ຄົນຕ່າງຊາດ
ເພື່ອບັດເຂົານິນທາພວກເຈົ້າ ຫາວ່າເປັນຄົນຊົ່ວເຮັດບໍ່ດີ ບັດເຂົາເຫັນການງານ
ອັນດີງາມທີ່ພວກເຈົ້າເຮັດນັ້ນ ເຂົາກໍຊິຍົກຍ້ອງຖວາຍກຽດພຣະເຈົ້າໃນມື້ທີ່ເພິ່ນຊິ
ສະເດັດມາ
2:13 ຈັ່ງຊັ້ນ ໃຫ້ຍອມຢູ່ໃຕ້ກົດໝາຍຄູ່ປະການຂອງສັງຄົມເດີ້ ຍ້ອນເຫັນແກ່ອົງ-
ພຣະຜູ້ເປັນເຈົ້າ *ນາຍຊີວິດຂອງຄົນເຮົາ* ບໍ່ວ່າເປັນກະສັດຜູ້ມີອໍານາດສູງສຸດກໍດີ
2:14 ຫລື ເປັນຜູ້ປົກຄອງບ້ານເມືອງກໍດີ ແມ່ນຜູ້ທີ່ກະສັດໄດ້ໃຊ້ມາໃຫ້ລົງໂທດຜູ້ທີ່
ສ້າງຄວາມຊົ່ວໃນສັງຄົມ ແລ້ວຈັ່ງໃຫ້ຍົກຍ້ອງຜູ້ທີ່ສ້າງຄວາມດີ
2:15 ຄືວ່າ ນີ້ກໍເປັນພຣະປະສົງຂອງພຣະເຈົ້າ ທີ່ວ່າ ດ້ວຍການປະກອບການດີນັ້ນ
ພວກເຈົ້າຊິໄດ້ປິດປາກຂອງຄົນໂງ່ທີ່ບໍ່ຈັກຫົບ
2:16 ຄືໃຫ້ຢູ່ຢ່າງເປັນ ໄທ ມີເສລີພາບ ແຕ່ຢ່າໃຊ້ເສລີພາບນັ້ນ ເປັນທີ່ປິດບັງຄວາມ
ຊົ່ວແນວບໍ່ດີ ແຕ່ໃຫ້ໃຊ້ຢ່າງຂ້າຮັບໃຊ້ຂອງພຣະເຈົ້າ
2:17 ໃຫ້ກຽດໝົດຄູ່ຄົນເດີ້ ໃຫ້ຮັກແພງພີ່ນ້ອງເດີ້ ໃຫ້ເຄົາລົບພຣະເຈົ້າເດີ້ ກັບໃຫ້
ຖວາຍກຽດກະສັດນໍາເດີ້
2:18 ສ່ວນຜູ້ເປັນຄົນໃຊ້ ໃຫ້ນົບນ້ອມເຊື່ອຟັງນາຍຂອງໂຕດ້ວຍຄວາມເຄົາລົບໃນ
ຄູ່ຢ່າງ ບໍ່ວ່ານາຍຜູ້ດີມີໃຈເປັນທໍາຢ່າງດຽວ ແຕ່ຄວນຊິເຮັດດີນໍານາຍຜູ້ມີໃຈຫາ-
ລຸນໂຫດຫ້ຽມນໍາ
2:19 ການເຮັດແນວນີ້ກໍເປັນທີ່ຍອມຮັບ ຄັ່ນທົນເອົາຕໍ່ການທຸກທໍລະມານອັນບໍ່ຍຸດ-
ຕິທໍາ ໂດຍມີຈິດສໍານຶກຜິດຊອບຜ່ອງໃສບໍລິສຸດຕໍ່ພຣະເຈົ້າ
2:20 ຄື ມັນຊິດີອີຫຍັງ ຄັ່ນພວກເຈົ້າອົດທົນຕໍ່ການຄ້ຽນຕີຍ້ອນແນວບໍ່ດີທີ່ໂຕເອງ
ໄດ້ເຮັດ ແຕ່ວ່າ ຄັ່ນເຈົ້າເຮັດແນວມັນດີແລ້ວ ກໍຍັງຖືກການກົດຂີ່ຂົ່ມເຫງເປັນ
ການຕອບສະໜອງ ຄັ່ນຮັບໄວ້ດ້ວຍໃຈນົບນ້ອມອົດທົນໄດ້ນານ ນີ້ກໍເປັນທີ່ມັກຕໍ່
ພຣະເຈົ້າອີຫລີ

2:21 ຍ້ອນເຫດນີ້ເນາະ ເພິ່ນໄດ້ເອີ້ນໄດ້ເຊີນພວກເຈົ້າ ໂດຍວ່າ ພຣະຄຣິດ ໄດ້ທົນ
ເອົາຕໍ່ຄວາມທຸກທໍລະມານເພື່ອເຮົາທັງຫລາຍແລ້ວ ເປັນແບບຢ່າງເພື່ອພວກເຈົ້າ
ຊິໄດ້ຈະເລີນຕາມຮອຍຕີນຂອງເພິ່ນ
2:22 "ແມ່ນເພິ່ນຜູ້ບໍ່ເຄີຍເຮັດບາບຈັກເທື່ອ ກັບບໍ່ເຄີຍມີຄຳລໍ້ລວງໃນປາກຂອງເພິ່ນ
ເລີຍ"
2:23 ຊຶ່ງ ຕອນເພິ່ນຖືກດ່າດ້ວຍຄຳຫຍາບຄາຍ ເພິ່ນບໍ່ໄດ້ໂຕ້ຕອບດ້ວຍຄຳຫຍາບ-
ຄາຍເລີຍ ບັດເພິ່ນທົນທຸກນັ້ນ ເພິ່ນບໍ່ໄດ້ຂູ່ໃສ່ຮ້າຍໃຜ ແຕ່ໄດ້ມອບເພິ່ນເອງໄວ້
ກັບພຣະເຈົ້າ ຜູ້ທີ່ພິພາກສາໂດຍຊອບທຳ
2:24 ແລ້ວແມ່ນເພິ່ນເອງ ທີ່ຮັບແບກບາບຂອງຄົນເຮົາທັງຫລາຍໄວ້ໃນໂຕເພິ່ນເອງ
ຢູ່ເທິງຫລັກໄມ້ນັ້ນ ເພື່ອວ່າພວກເຮົາ ທີ່ຕາຍຈາກສະພາບບາບແລ້ວ ອາດ ດຳ-
ເນີນຊີວິດຕາມທາງຊອບທຳ ດ້ວຍວ່າ ການທີ່ພວກເຈົ້າໄດ້ຫາຍເປັນດີແລ້ວນັ້ນ
ໄດ້ຍ້ອນຮອຍຂ້ຽນຂອງເພິ່ນ
2:25 ດ້ວຍວ່າ ແຕ່ກ່ອນພວກເຈົ້າເຄີຍເປັນຄືຝູງແກະທີ່ຫລົງທາງໄປ ແຕ່ບັດນີ້ໄດ້
ກັບມາຫາພຣະຜູ້ລ້ຽງເບິ່ງແຍງຈິດວິນຍານຂອງພວກເຈົ້າແລ້ວ

## 1 ເປໂຕ ບົດທີ 3

3:1 ແລ້ວໃນທຳນອງດຽວກັນ ສ່ວນຜູ້ເປັນເມຍ ກໍໃຫ້ນອບນ້ອມຖ່ອມໂຕຕໍ່ຜົວໂຕ
ເອງ ເພື່ອວ່າ ຄັ່ນຜົວຂອງນາງບໍ່ເຊື່ອຟັງ ພຣະຄຳ ຂອງພຣະເຈົ້າ ພຶດຕິກຳອັນດີ
ງາມຂອງເມຍ ຊິໄດ້ເປັນສິ່ຈູງໃຈເຂົາໃຫ້ມາຫາພຣະເຈົ້າໂດຍບໍ່ຕ້ອງໃຊ້ຄວາມ
ເວົ້າເລີຍ
3:2 ບັດເຂົາສຳຜັດກັບພຶດຕິກຳບໍລິສຸດຂອງເຈົ້າຜູ້ເປັນເມຍອັນປະກອບດ້ວຍ
ຄວາມເຄົາລົບນອບນ້ອມ
3:3 ໝາຍຄວາມວ່າ ຢ່າໃຫ້ການເສີມງາມປະດັບຕົກແຕ່ງຂອງພວກເຈົ້າເປັນແຕ່
ທາງພາຍນອກຊື່ໆ ເດີ້ ເຊັ່ນການຖັກຜົມ ການໃສ່ເຄື່ອງທອງຄຳ ຫລືການນຸ່ງຫົ່ມ
ເສື້ອຜ້າງາມໆ *ເປັນຕົ້ນ*
3:4 ແຕ່ຄວນໃຫ້ຄວາມສວຍງາມຂອງເຈົ້າເປັນຢ່າງສ່ວນເລິກໃນຈິດໃຈ ຄືເປັນ
ຄວາມສວຍງາມອັນປະກອບ ດ້ວຍຄວາມອ່ອນສຸພາບກັບສະຫງົບສະຫງ່ຽມ ຊຶ່ງ

ເປັນແນວທີ່ບໍ່ເສື່ອມສະຫລາຍໄປ ມີຄຸນຄ່າອັນປະເສີດຢ່າງຫລາຍໃນສາຍຕາ
ຂອງພຣະເຈົ້າ
3:5 ນີ້ກໍເປັນວິທີການປະດັບກາຍໃຫ້ສວຍງາມຂອງຍິງບໍລິສຸດໃນສະໄໝກ່ອນ ຜູ້ທີ່
ມີຄວາມເຊື່ອໝັ້ນໃນພຣະເຈົ້າ ແລ້ວໄດ້ນອບນ້ອມຖ່ອມໂຕຕໍ່ຜົວຂອງໂຕນໍາ
3:6 ຄືກັນກັບນາງ ຊາຣາ ເປັນໂຕຢ່າງໃນການເຊື່ອຟັງ ອັບຣາຮາມ ຜູ້ເປັນຜົວ ຈັ່ງ
ເອີ້ນ ລາວ ວ່າ *“ນາຍຜູ້ຂ້າ”* ແລ້ວສ່ວນພວກເຈົ້າກໍຊິໄດ້ເປັນບຸດຫລານ *ແຫ່ງ
ຄວາມເຊື່ອ* ຂອງນາງ ຄັ່ນພວກເຈົ້າເຮັດການດີງາມ ແລ້ວບໍ່ໄດ້ຕົກໃຈຢ້ານອີ-
ຫຍັງ
3:7 ສ່ວນຜູ້ເປັນຜົວຄືກັນ ຄວນຊິຢູ່ກິນກັບເມຍ *ຂອງໂຕ* ດ້ວຍຄວາມເຂົ້າໃຈ ຄຶດ
ເຫັນໃຈເຂົາ ຈັ່ງຖະໜອມນໍ້າໃຈໃຫ້ກຽດເມຍ ຊຶ່ງເປັນຝ່າຍອ່ອນແອກວ່າ ຢູ່ນໍາກັນ
ຢ່າງທາຍາດໃນພຣະຄຸນແຫ່ງຊີວິດອັນເປັນນິລະດົກ ເພື່ອຄໍາອະທິຖານຂອງເຈົ້າ
ຊິບໍ່ມີແນວຂັດຂວາງ
3:8 ສະຫລຸບແລ້ວ ໃຫ້ໝົດຄູ່ຄົນປອງດອງສາມັກຄີກັນ ເປັນນໍ້າໜຶ່ງໃຈດຽວກັນ
ເຫັນອົກເຫັນໃຈກັນ ຮັກແພງກັນແລະກັນຄືກັນກັບພີ່ນ້ອງ ມີຈິດໃຈອ່ອນໂຍນ ມີ
ການອ່ອນສຸພາບຕໍ່ກັນແລະກັນ
3:9 ໂດຍບໍ່ມີການຕອບສະໜອງຊົ່ວຮ້າຍຕໍ່ກັນແລະກັນ ຫລືການແຊ່ງດ່າຕໍ່ກັນ
ແລະກັນ ແຕ່ກົງກັນຂ້າມ ໃຫ້ອວຍພອນເຂົາຕ່າງຫາກ ໂດຍຮູ້ໄວ້ວ່າ ພວກເຈົ້າ
ໄດ້ຮັບການເອີ້ນການເຊີນມາເພື່ອການເຮັດແນວນີ້ ເພື່ອຊິໄດ້ຮັບພຣະພອນເປັນ
ມໍລະດົກ
3:10 ຕາມ ຖ້ອຍຄໍາ ວ່າ “ຜູ້ທີ່ຊິແພງຊີວິດ ປາດຖະໜາຢາກເຫັນມື້ງາມຍາມດີ ໃຫ້
ຜູ້ນັ້ນຄວບຄຸມລີ້ນຂອງໂຕເອງໄວ້ຈາກການເວົ້າຄວາມຊົ່ວເດີ້ ກັບຫ້າມປາກໄວ້
ຈາກການເວົ້າຄໍາອຸບາຍລໍ້ລວງ
3:11 ແຕ່ໃຫ້ເຂົາຫລີກໜີຈາກຄວາມຊົ່ວຮ້າຍເດີ້ ຫັນມາເຮັດຄວາມດີ ແລ້ວໃຫ້
ຊອກຫາຕິດຕາມຄວາມສະຫງົບສຸກເດີ້

3:12 ຍ້ອນວ່າ ຕາຂອງອົງພຣະຜູ້ເປັນເຈົ້າເຝົ້າເບິ່ງຄົນຊອບທຳຂອງເພິ່ນ ແລ້ວຫູ
ຂອງເພິ່ນກໍຮັບຟັງຄຳອະທິຖານຂອງເຂົາ ແຕ່ວ່າ ໜ້າຂອງເພິ່ນຕໍ່ຕ້ານຄົນທັງ-
ຫລາຍທີ່ຕັ້ງໂຕເຮັດໃນທາງຊົ່ວ”
3:13 ແລ້ວໃຜແໜ່ຊິທຳລາຍພວກເຈົ້າ ຄັ່ນເຈົ້າໃຝ່ໃຈຕິດຕາມແຕ່ແນວມັນດີ
3:14 ແຕ່ ແມ່ນຄັ່ນວ່າພວກເຈົ້າ ອາດ ຊິຕ້ອງທົນທຸກ ຍ້ອນເຫັນແກ່ການຊອບທຳ
ເປັນເຫດ ພວກເຈົ້າກໍໄດ້ພົບເປັນສຸກແລ້ວ ຄື *“ຢ່າສູ່ຢ້ານເດີ້ ຫລືຄຶດຕຶກໃຈ ຍ້ອນ
ຄຳຂູ່ຂອງເຂົາເລີຍ”*
3:15 ແຕ່ໃຫ້ໝາຍອົງພຣະຜູ້ເປັນພຣະເຈົ້າໄວ້ໃນໃຈຂອງພວກເຈົ້າເດີ້ ພ້ອມຢູ່ສະເ
ໝີທີ່ຊິອ້າງເຫດຜົນໃຫ້ຄູ່ຄົນທີ່ຖາມເຖິງເຫດ ທີ່ມີຄວາມຫວັງໃນຫົວໃຈຂອງພວກ
ເຈົ້າ ຈັ່ງຕອບດ້ວຍຄວາມອ່ອນສຸພາບກັບເຄົາລົບ
3:16 ຈັ່ງມີຈິດສຳນຶກຜິດຊອບຜ່ອງໃສດີນຳ ເພື່ອວ່າບັດເຂົາເວົ້າໃສ່ຮ້າຍພວກເຈົ້າ
ວ່າເປັນຄົນເຮັດແຕ່ແນວຊົ່ວ ຄືພວກເຂົາຊິຕ້ອງມີຄວາມລະອາຍ ໂລດ ຜູ້ທີ່ແຊ່ງ
ດ່າພຶດຕິກຳອັນດີຂອງພວກເຈົ້າໃນ ພຣະຄຣິດ ນັ້ນ
3:17 ໂດຍວ່າ ມັນດີກວ່າຫລາຍ ຄັ່ນພວກເຈົ້າຊິທົນທຸກຍ້ອນເຮັດຄວາມດີງາມຕາມ
ພຣະປະສົງຂອງພຣະເຈົ້າ ແທນທີ່ຊິຕ້ອງທົນທຸກຍ້ອນໄດ້ເຮັດຊົ່ວ
3:18 ດ້ວຍວ່າ ພຣະຄຣິດ ໄດ້ທົນທຸກທໍລະມານພຽງເທື່ອດຽວເພື່ອ *ລົບ* ບາບ ຄືຜູ້
ຊອບທຳເພື່ອຜູ້ບໍ່ຊອບທຳ ເພື່ອຊິໄດ້ນຳຄົນເຮົາທັງຫລາຍມາເຖິງພຣະເຈົ້າ ຄື
ພຣະກາຍຂອງເພິ່ນຖືກປະຫານໃຫ້ຕາຍ ແຕ່ໄດ້ຮັບການເປັນຂຶ້ນມາໃຫ້ມີຊີວິດ
ໂດຍລິດຂອງ ພຣະວິນຍານ
3:19 ແລ້ວໂດຍ ພຣະວິນຍານ ນັ້ນ ເພິ່ນໄດ້ສະເດັດໄປປະກາດແກ່ພວກວິນຍານທີ່
ຖືກກັກຂັງໄວ້ຢູ່
3:20 ຊຶ່ງແຕ່ກ່ອນ ພວກນີ້ບໍ່ຍອມເຊື່ອຟັງ ຕອນທີ່ພຣະເຈົ້າໄດ້ອົດກັ້ນໄວ້ໄດ້ດົນ-
ນານໃນສະໄໝ ໂນເອ ນັ້ນ ຕອນ ລາວ ພວມຈັດກຽມຕໍ່ເຮືອໃຫຍ່ ຊຶ່ງໃນເຮືອລຳ
ນັ້ນ ມີພຽງແຕ່ແປດຄົນເທົ່ານັ້ນທີ່ໄດ້ເຂົ້າໄປ ລອດພົ້ນຈາກນ້ຳທ່ວມໂລກ
3:21 ຊຶ່ງບັດນີ້ມີແບບຢ່າງ ເປັນພາບພົດເວົ້າເຖິງຄວາມລອດພົ້ນຂອງຄົນເຮົາ ຄືພິ-
ທີການຮັບຈຸ່ມນ້ຳບັບຕິດສະມາ (ຊຶ່ງບໍ່ໄດ້ຊຳລະລ້າງຄວາມເປື້ອນຝ່າຍເນື້ອໜັງ

ແຕ່ໃຫ້ເຮົາມີຈິດສຳນຶກຜິດຊອບຜ່ອງໃສດີຕໍ່ພຣະເຈົ້າ) ໂດຍການເປັນຂຶ້ນມາຈາກ
ຕາຍຂອງພຣະເຢຊູຄຣິດເຈົ້ານັ້ນເນາະ
3:22 ຊຶ່ງໂຕເພິ່ນເອງໄດ້ສະເດັດເຂົ້າສະຫວັນແລ້ວ ພວມສະຖິດຢູ່ເບື້ອງຂວາຂອງ
ພຣະເຈົ້າ ແລ້ວພວກເທວະທູດ ກັບພວກເທວວິນຍານ ກັບພວກເທບເຈົ້າ ຜູ້ມີລິດ
ມີອຳນາດທັງຫລາຍ ໃຫ້ຢູ່ພາຍໃຕ້ລິດທານຸພາບຂອງເພິ່ນທັງໝົດ

## 1 ເປໂຕ ບົດທີ 4

4:1 ຈັ່ງຊັ້ນ ດ້ວຍວ່າ ພຣະຄຣິດ ໄດ້ທົນທຸກທໍລະມານໃນເນື້ອໜັງເພື່ອພວກເຮົາ
ທັງຫລາຍ ຈັ່ງໃຫ້ພວກເຈົ້າຕັ້ງຄວາມນຶກຄຶດຢ່າງດຽວກັນ ເປັນເຄື່ອງອາວຸດ
ປ້ອງກັນໂຕໄວ້ເດີ້ ໂດຍວ່າ ຜູ້ຄົນທີ່ທົນທຸກທໍລະມານທາງເນື້ອໜັງໄດ້ຍົກເລີກ
ການກ່ຽວຂ້ອງກັບບາບແລ້ວ
4:2 ເພື່ອເຂົາຜູ້ນັ້ນຊິບໍ່ດຳເນີນຊີວິດຢູ່ໃນໂລກນີ້ຕໍ່ໄປຕາມເນື້ອໜັງ ຕາມຄວາມກະ-
ຫາຍຝ່າຍສັງຄົມ ແຕ່ຕາມພຣະປະສົງຂອງພຣະເຈົ້າ
4:3 ໂດຍວ່າ ພວກເຮົາເຄີຍໃຊ້ຊີວິດເກົ່າ ເຮັດຕາມໃຈມັກຢ່າງຄົນຕ່າງຊາດ ຕອນ
ພວກເຮົາເຄີຍດຳເນີນຊີວິດຕາມແນວສົກກະປົກລາມົກ ຕາມຕັນຫາແຫ່ງເພດ
ກິນເຫລົ້າເມົາຢາ ກິນລ້ຽງຕ່າງໆ ຈັດວົງກິນເຫລົ້າໂອຍວາຍກັນ ກັບການໄຫວ້ຮູບ
ເຄົາລົບອັນເປັນຕາຊັງ
4:4 ຊຶ່ງຄົນຈຳພວກນີ້ແປກໃຈເປັນຕາງຶດທີ່ວ່າ ພວກເຈົ້າໄດ້ເລີກການດຳເນີນຕາມ
ເຂົາ ຄືບໍ່ໄດ້ເຮັດແນວມະລຳມະລອຍນຳພວກເຂົາອີກຕໍ່ໄປ ຈັ່ງເວົ້າໃສ່ຮ້າຍພວກ
ເຈົ້າ
4:5 ແລ້ວຄົນຈຳພວກນີ້ຊິຕ້ອງຣາຍງານໂຕຕໍ່ພຣະເຈົ້າ ຜູ້ເພິ່ນພ້ອມແລ້ວທີ່ພິພາກ-
ສາທັງຄົນເປັນກັບຄົນຕາຍ
4:6 ຍ້ອນເຫດນີ້ເອງ ຂ່າວປະເສີດໄດ້ຮັບການປະກາດ ແມ່ນແຕ່ປະກາດໃຫ້ຄົນ
ຕາຍໄປແລ້ວນັ້ນ ເຖິງແມ່ນວ່າເຂົາຊິຖືກພິພາກສາດ້ວຍມະນຸດໃນເນື້ອໜັງ ແຕ່
ເຂົາຊິມີຊີວິດຢູ່ຝ່າຍຈິດວິນຍານຕາມພຣະປະສົງຂອງພຣະເຈົ້າ
4:7 ແຕ່ວ່າ ການສິ້ນສຸດລົງຂອງໝົດທັງປວງໃກ້ຊິມາຮອດແລ້ວ ຈັ່ງຊັ້ນ ໃຫ້ພວກ
ເຈົ້າຢູ່ຢ່າງອ້ອມຄອບເດີ້ ຄອຍຖ້າເຝົ້າລະວັງໃນການອະທິຖານນຳເດີ້

4:8 ແລ້ວສຳຄັນກວ່າແນວອື່ນທັງໝົດ ພວກເຈົ້າຄວນຊິມີໃຈຮັກແພງຕໍ່ກັນແລະກັນ
ດ້ວຍໃຈກະຕືລືລົ້ນ ດ້ວຍວ່າ ຄວາມຮັກແພງສາມາດປິດບັງຄວາມຜິດຫລາຍໆ
ໄວ້ໄດ້
4:9 ແລ້ວພວກເຈົ້າຄວນຊິມີໃຈຕ້ອນຮັບກັນແລະກັນໂດຍບໍ່ມີການຈົ່ມວ່າກັນ
4:10 ຕາມທີ່ຄູ່ຄົນເຄີຍໄດ້ຮັບພົນສະຫວັນພິເສດຈາກພຣະເຈົ້າມາແລ້ວ ໃຫ້ຮັບໃຊ້
ຊຶ່ງກັນແລະກັນ ຄືກັນກັບຜູ້ຮັບໃຊ້ທີ່ດີ ທີ່ໄດ້ຮັບມອບໜ້າທີ່ໃນການເບິ່ງແຍງ
ພຣະກະລຸນາທິຄຸນຂອງພຣະເຈົ້າ ຊຶ່ງມີຫລາຍຢ່າງເຫລືອລົ້ນ
4:11 ຄັນຜູ້ໜຶ່ງຜູ້ໃດຊິເວົ້າເປັນຄຳສັ່ງສອນ ກໍໃຫ້ເວົ້າຕາມຖ້ອຍຄຳຂອງພຣະເຈົ້າ
ຄັນຜູ້ໜຶ່ງຜູ້ໃດຊິຮັບໃຊ້ກັນ ກໍໃຫ້ຮັບໃຊ້ຕາມຄວາມສາມາດທີ່ພຣະເຈົ້າໄດ້ໂຜດ-
ໃຫ້ ເພື່ອວ່າພຣະເຈົ້າຊິໄດ້ຮັບກຽດໂດຍທາງ ພຣະເຢຊູຄຣິດ ຊຶ່ງວ່າພຣະກຽດ
ກັບອຳນາດຄອບຄອງນັ້ນ ມີແດ່ເພິ່ນຕະຫລອດໄປເປັນນິດ ອາເມນ
4:12 ບັດນີ້ ພີ່ນ້ອງທີ່ຮັກເອີຍ ຢ່າສູ່ຄຶດແປກໃຈຫລາຍຍ້ອນການທົດລອງອັນແສນ-
ສາຫັດຄືໄຟ ທີ່ຊິມາພິສູດພວກເຈົ້າເດີ້ ຢ່າງເປັນເຫດການອັນແປກປະຫລາດທີ່
ໄດ້ເກີດຂຶ້ນກັບພວກເຈົ້າດ້ວຍບັງເອີນ
4:13 ແຕ່ໃຫ້ຊົມຊື່ນຍິນດີເດີ້ ທີ່ວ່າພວກເຈົ້າໄດ້ມີໂອກາດຮ່ວມທຸກກັບ ພຣະຄຣິດ
ເພື່ອວ່າບັດເພິ່ນມາປາກົດເພິ່ນເອງດ້ວຍຄວາມສະຫງ່າ ພວກເຈົ້າກໍຊິດີໃຈມີ
ຄວາມຊົມຊື່ນຍິນດີຢ່າງເຫລືອລົ້ນນຳ
4:14 ຄື ຄັນພວກເຈົ້າຖືກດ່າວ່າກ່າວຍ້ອນເຫັນແກ່ພຣະນາມຂອງ ພຣະຄຣິດ ພວກ
ເຈົ້າກໍໄດ້ພົບເປັນສຸກ ຍ້ອນວ່າ ພຣະວິນຍານ ທີ່ປະກອບດ້ວຍສະຫງ່າລາສີຂອງ
ພຣະເຈົ້າສະຖິດຢູ່ກັບພວກເຈົ້າແລ້ວ ຄື ຝ່າຍຊາວ ໂລກນັ້ນ ເພິ່ນກໍຖືກການກ່າວ
ຮ້າຍ ແຕ່ຝ່າຍພວກເຈົ້າເພິ່ນໄດ້ຮັບການຖວາຍກຽດ
4:15 ແຕ່ວ່າ ຢ່າໃຫ້ຜູ້ໃດໃນພວກເຈົ້າເດືອດຮ້ອນເປັນໂທດຍ້ອນເຮັດຜິດເດີ້ ວ່າ
ເປັນການຕາຍກຳ ຫລືເປັນຂະໂມຍ ຫລືເຮັດຊົ່ວຮ້າຍ ຫລືທ່ຽວຫຍຸ້ງກັບທຸລະຂອງ
ຄົນອື່ນ

4:16 ແຕ່ຄັ່ນຜູ້ໃດເດືອດຮ້ອນເປັນໂທດຍ້ອນເປັນຄຣິສຕຽນ ຢ່າໃຫ້ຜູ້ນັ້ນຖືວ່າເປັນ
ເລື່ອງລະອາຍເລີຍເດີ້ ແຕ່ໃຫ້ເຂົາຖວາຍກຽດສັນລະເສີນພຣະເຈົ້າໃນການນັ້ນ
ເດີ້
4:17 ຄື ມັນຮອດຍາມແລ້ວທີ່ການພິພາກສາຊິຕ້ອງເລີ່ມຕົ້ນຢູ່ເຮືອນຂອງພຣະເຈົ້າ
ກ່ອນ ແລ້ວຄັ່ນມັນຊິເລີ່ມຕົ້ນກັບພວກເຮົາກ່ອນ ຈຸດປາຍທາງຂອງພວກຄົນທີ່ບໍ່-
ຍອມເຊື່ອຟັງຂ່າວປະເສີດຂອງພຣະເຈົ້າຊິເປັນຈັ່ງໃດ
4:18 ດ້ວຍວ່າ "ຄັ່ນຄົນຊອບທຳຂອງພຣະເຈົ້າຊິໄດ້ລອດພົ້ນໄປໄດ້ ແຕ່ໂດຍຄວາມ
ຍາກລຳບາກ ປາກົດວ່າ ພວກຄົນທີ່ບໍ່ຖວາຍກຽດພຣະເຈົ້າ ກັບຄົນຂີ້ບາບນັ້ນ ຊິ
ຢູ່ໃສ"
4:19 ຈັ່ງຊັ້ນ ຂໍໃຫ້ຜູ້ຄົນທັງຫລາຍທີ່ຕ້ອງທົນທຸກຍາກຕາມພຣະປະສົງຂອງພຣະ-
ເຈົ້ານັ້ນ ຝາກຈິດວິນຍານຂອງໂຕເອງໄວ້ກັບເພິ່ນເດີ້ ໃນການເຮັດດີ ຄືກັນກັບ
ຝາກໄວ້ກັບພຣະຜູ້ສ້າງ ຜູ້ເພິ່ນສັດຊື່ພັກດີເດີ້

# 1 ເປໂຕ ບົດທີ 5

5:1 ແລ້ວສ່ວນພວກຜູ້ປົກຄອງໃນພວກເຈົ້ານັ້ນ ເຮົາຈັ່ງຂໍໜຸນໃຈໃນຖານະວ່າເຮົາ
ເອງເປັນຜູ້ປົກຄອງຄືກັນ ແລ້ວໄດ້ເຫັນຄວາມທຸກທໍລະມານຂອງ ພຣະຄຣິດ ກັບ
ຕາໂຕເອງ ກັບມີສ່ວນຮ່ວມໃນການຮັບສະຫງ່າລາສີຂອງ ພຣະຄຣິດ ທີ່ຊິປາກົດ
ໃນພາຍໜ້າ
5:2 *ຈັ່ງຊັ້ນ* ໃຫ້ລ້ຽງງຝູງແກະຂອງພຣະເຈົ້າທີ່ຢູ່ນຳພວກເຈົ້າເດີ້ ຮັບໃຊ້ໃນການ
ເບິ່ງແຍງເຂົາ ບໍ່ແມ່ນດ້ວຍການຝືນໃຈ ແຕ່ດ້ວຍເຕັມໃຈ ບໍ່ແມ່ນດ້ວຍການເຫັນ
ແກ່ໄດ້ ແຕ່ດ້ວຍການກະຕືລືລົ້ນ
5:3 ກັບວ່າ ບໍ່ແມ່ນຄືກັນກັບເປັນຫົວໜ້າເໜືອເຂົາ ຜູ້ທີ່ຮັບຝາກໄວ້ກັບເຈົ້ານັ້ນ ແຕ່
ເປັນແບບຢ່າງໃຫ້ພວກເຂົາຜູ້ເປັນຝູງແກະ *ຂອງພຣະເຈົ້າ*
5:4 ແລ້ວບັດ ພຣະຜູ້ລ້ຽງອັນຍິ່ງໃຫຍ່ນັ້ນ ໄດ້ມາປາກົດແລ້ວ ພວກເຈົ້າຊິໄດ້ມົງກຸດ
ປະກອບດ້ວຍສະຫງ່າລາສີອັນຮຸ່ງເຮືອງ ທີ່ບໍ່ມີການຫາຍໄປເລີຍ
5:5 ໃນທຳນອງດຽວກັນ ຜູ້ທີ່ອ່ອນອາຍຸໃນພວກເຈົ້າ ໃຫ້ນອບນ້ອມຖ່ອມໂຕຕໍ່ຜູ້
ປົກຄອງຜູ້ມີອາຍຸກວ່າເດີ້ ເອີ້ ໃຫ້ພວກເຈົ້າຄູ່ຄົນຍອມນອບນ້ອມຕໍ່ກັນແລະກັນ

ອາໄສການຖ່ອມຕົວເປັນຄືເຄື່ອງນຸ່ງຫົ່ມເດີ້ ດ້ວຍວ່າ *"ພຣະເຈົ້າຕໍ່ຕ້ານຄົນ
ເຫຍື້ອຫຍິ່ງຈອງຫອງ ແຕ່ປະທານພຣະກະລຸນາທິຄຸນໃຫ້ກັບຄົນຖ່ອມໃຈ"*
5:6 ຈັ່ງຊັ້ນ ໃຫ້ຖ່ອມໃຈລົງ ຢູ່ພາຍໃຕ້ຝ່າມືອັນມີລິດຂອງພຣະເຈົ້າເດີ້ ແລ້ວເພິ່ນຊິ
ໄດ້ຊູພວກເຈົ້າຂຶ້ນ ບັດຮອດຍາມເວລາອັນເໝາະນັ້ນ
5:7 ແລ້ວຈັ່ງມອບຄວາມກະວົນກະວາຍຂອງພວກເຈົ້າໄວ້ກັບພຣະເຈົ້າ ຍ້ອນວ່າ
ເພິ່ນຫ່ວງໃຍພວກເຈົ້າ
5:8 ຈັ່ງໃຫ້ມີສະຕິອ້ອມຄອບ ຮູ້ຈັກການຄວບຄຸມຕົວເອງເດີ້ ຍ້ອນວ່າສັດຕູຂອງ
ພວກເຈົ້າ ໄດ້ວົນວຽນໄປມາຄືກັນກັບສິງໂຕຄໍາ ຣາມ ທ່ຽວຊອກຫາຄົນທີ່ມັນຊິ
ກັດກິນໄດ້
5:9 ໃຫ້ຕໍ່ຕ້ານມັນເດີ້ ດ້ວຍການຢືນໝັ້ນໃນຄວາມເຊື່ອ ໂດຍຮູ້ກັນວ່າ ຄວາມຍາກ
ລໍາບາກຢ່າງທີ່ພວກເຈົ້າພວມທົນເອົາຢູ່ຫັ້ນ ໄດ້ມີກັບພີ່ນ້ອງທັງຫລາຍຂອງພວກ
ເຈົ້າ ຜູ້ທີ່ຢູ່ໃນໂລກຄືກັນ
5:10 ແລ້ວຂໍໃຫ້ພຣະເຈົ້າ ຜູ້ມີພຣະກະລຸນາທິຄຸນທັງໝົດ ຜູ້ເພິ່ນທີ່ໄດ້ເອີ້ນໄດ້ເຊີນ
ໃຫ້ພວກເຈົ້າມາສູ່ສະຫງ່າລາສີອັນອັນຕະຫລອດໄປເປັນນິດຂອງເພິ່ນ ໂດຍທາງ
ພຣະເຢຊູຄຣິດ ຫລັງຈາກພວກເຈົ້າໄດ້ທົນເອົາຄວາມທຸກຢູ່ໜ່ອຍໜຶ່ງ ຈັ່ງຊິ
ໂຜດໃຫ້ພວກເຈົ້າສູ່ການດີພ້ອມສົມບູນແບບ ຕັ້ງໃຫ້ໝັ້ນຄົງ ແຂງແຮງ ມີຮາກ
ຖານຖາວອນ
5:11 ຈັ່ງຂໍພຣະກຽດ ກັບອໍານາດຄອບຄອງມີແດ່ເພິ່ນຕະຫລອດການເປັນນິດ ອາ-
ເມນ
5:12 ເຮົາ ເປໂຕ ໄດ້ຂຽນມາຍັງພວກເຈົ້າຢ່າງຫຍໍ້ໆ ສົ່ງດ້ວຍມືນາຍ ຊີລາວານ ຊຶ່ງ
ເຮົາຖືວ່າເປັນພີ່ນ້ອງທີ່ສັດຊື່ພັກດີໃນພຣະເຈົ້າ ເຮົາຈັ່ງເຕືອນສະຕິກັບເປັນພະ-
ຍານຕໍ່ພວກເຈົ້າວ່າ ນີ້ກໍເປັນເລື່ອງພຣະກະລຸນາທິຄຸນທີ່ແທ້ຈິງຂອງພຣະເຈົ້າ ຊຶ່ງ
ພວກເຈົ້າພວມຢືນຢູ່
5:13 ແລ້ວພີ່ນ້ອງກຸ່ມຜູ້ເຊື່ອຢູ່ເມືອງ ບາບີໂລນ ຜູ້ຊຶ່ງພຣະເຈົ້າເລືອກໄວ້ນໍາກັນກັບ
ພວກເຈົ້າ ຝາກຄວາມຄຶດຮອດມາຍັງພວກເຈົ້າ ພ້ອມກັບ ມາຣະໂກ ລູກຂອງເຮົາ
*ໃນພຣະເຈົ້າ* ນໍາ

5:14 ໃຫ້ທັກທາຍຊຶ່ງກັນແລະກັນດ້ວຍຄວາມຮັກຕາມທຳນຽມເດີ້ ຈົ່ງຂໍໃຫ້ສັນຕິ-
ພາບດຳລົງຢູ່ກັບພວກເຈົ້າທັງຫລາຍຢູ່ໃນ ພຣະເຢຊູຄຣິດ ເຖີ້ນ ອາເມນ

# 2 ເປໂຕ

## 2 ເປໂຕ ບົດທີ 1

1:1 ຈາກ ຊີໂມນເປໂຕ ຂ້າຮັບໃຊ້ກັບທູດພິເສດຂອງ ພຣະເຢຊູຄຣິດ ຮຽນມາຍັງ
ຜູ້ຄົນທັງຫລາຍຜູ້ທີ່ມີຄວາມເຊື່ອອັນປະເສີດລ້ຳຄ່າຢ່າງດຽວກັນກັບພວກເຮົາ
ໂດຍຄວາມຊອບທຳຂອງ ພຣະເຢຊູຄຣິດ ຜູ້ເປັນພຣະເຈົ້າກັບພຣະຜູ້ໂຜດຂອງ
ຄົນເຮົາ
1:2 ຈົ່ງຂໍໃຫ້ພຣະກະລຸນາທິຄຸນກັບສັນຕິພາບ ເພີ່ມພູນຫລາຍຂຶ້ນໃຫ້ພວກເຈົ້າ
ໂດຍການຮູ້ຈັກເຂົ້າໃຈດີໃນເລື່ອງພຣະເຈົ້າ ກັບໃນເລື່ອງ ພຣະເຢຊູເຈົ້າ ນາຍຊີ-
ວິດຂອງພວກເຮົາທັງຫລາຍ
1:3 ຄືໂດຍທາງລິດທານຸພາບຂອງພຣະເຈົ້າ ເພິ່ນໄດ້ປະທານສິ່ງສາລະພັດຄົບໝົດ
ໃຫ້ພວກເຮົາແລ້ວ ກ່ຽວກັບຊີວິດຄວາມເປັນຢູ່ ກັບການຖວາຍກຽດພຣະເຈົ້າ
ໂດຍການຮູ້ຈັກດີເຖິງເພິ່ນ ຜູ້ເພິ່ນໄດ້ເອີ້ນໄດ້ເຊີນພວກເຮົາມາ ທາງສະຫງ່າລາສີ
ກັບຄຸນງາມຄວາມດີຂອງເພິ່ນ
1:4 ດ້ວຍນີ້ເນາະ ເພິ່ນປະທານຄຳໝັ້ນສັນຍາອັນປະເສີດລ້ຳຄ່າ ຫລາຍປະການ
ອັນໃຫຍ່ຍິ່ງ ທີ່ໃຫ້ໄວ້ກັບພວກເຮົາແລ້ວ ເພື່ອວ່າ ດ້ວຍແນວໝູ່ນີ້ ພວກເຈົ້າມີສ່ວນ
ຮ່ວມໃນການເປັນພຣະເຈົ້າຂອງເພິ່ນ ຊຶ່ງໄດ້ລອດພົ້ນຈາກຄວາມເສື່ອມສະ-
ຫລາຍທາງໂລກແລ້ວ ກັບຄວາມກະຫາຍທາງຕັນຫາແຫ່ງເພດຂອງມັນ
1:5 ຍ້ອນເຫດນີ້ເອງ ໃຫ້ພະຍາຍາມຈົນສຸດກຳລັງ ເອົາທ່ານຄວາມດີມາເສີມໃສ່
ຄວາມເຊື່ອເດີ້ ແລ້ວເອົາຄວາມອ້ອມຮູ້ມາເສີມໃສ່ທ່ານຄວາມດີ
1:6 ແລ້ວເອົາການຮູ້ຈັກບັງຄັບຕົນມາເສີມໃສ່ຄວາມອ້ອມຮູ້ ແລ້ວເອົາຄວາມອົດ
ທົນໄວ້ນານມາເສີມໃສ່ການຮູ້ຈັກບັງຄັບຕົນ ແລ້ວເອົາການຖວາຍກຽດພຣະເຈົ້າ
ມາເສີມໃສ່ຄວາມອົດທົນໄວ້ນານ
1:7 ແລ້ວເອົາຄວາມເມດຕາປານີພີ່ນ້ອງ ມາເສີມໃສ່ການຖວາຍກຽດພຣະເຈົ້າ
ແລ້ວເອົາຄວາມຮັກແບບຂອງພຣະເຈົ້າ ມາເສີມໃສ່ຄວາມເມດຕາປານີພີ່ນ້ອງ

1:8 ຄື ຄັນວ່າຄຸນສົມບັດແນວໝູ່ນີ້ເປັນຂອງພວກເຈົ້າຢ່າງເພີ່ມພູນຂຶ້ນ ຊີວິດຂອງ
ພວກເຈົ້າຊິບໍ່ບໍ່ປະໂຫຍດໄປ ກັບຊິບໍ່ຂາດເຫດຂາດຜົນໃນການຮູ້ຈັກເຖິງອົງ
ພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງພວກເຮົາ
1:9 ແຕ່ຜູ້ທີ່ຂາດຄຸນສົມບັດແນວໝູ່ນີ້ ເປັນຄົນສາຍຕາສັ້ນເຖິງບອດ ລືມຮອດໂຕ
ເຂົາເອງ ວ່າໄດ້ຮັບການຊຳລະຈາກຄວາມຜິດບາບເກົ່າຂອງເຂົາແລ້ວ
1:10 ຈັ່ງຊັ້ນ ພີ່ນ້ອງທັງຫລາຍເອີຍ ໃຫ້ພະຍາຍາມໃສ່ໃຈຢ່າງຍິ່ງ ພິສູດວ່າການ
ເອີ້ນມາກັບການທີ່ພຣະເຈົ້າເລືອກຂອງພວກເຈົ້ານັ້ນ ມັນໝັ້ນຄົງສໍ່າໃດ ຄືຄັນ
ພວກເຈົ້າເຮັດແນວຈັ່ງຊີ້ ພວກເຈົ້າຊິບໍ່ໄດ້ສະດຸດລົ້ມລົງຈັກເທື່ອເລີຍ
1:11 ດ້ວຍວ່າ ທາງເຂົ້າອານາຈັກອັນອັນຕະຫລອດໄປເປັນນິດຂອງ ພຣະເຢຊູ-
ຄຣິດ ພຣະຜູ້ໂຜດຂອງພວກເຮົາ ຊິຖືກເປີດໄວ້ຢ່າງກວ້າງຂວາງໃຫ້ພວກເຈົ້າ
1:12 ຍ້ອນເຫດນີ້ເອງ ຂ້ອຍຊິບໍ່ໄດ້ຍັບຍັ້ງ ທີ່ຊິເຕືອນສະຕິພວກເຈົ້າ ເຖິງແມ່ນວ່າ
ພວກເຈົ້າຮູ້ຈັກຢູ່ ກັບຕັ້ງໝັ້ນຢູ່ໃນຄວາມຈິງຢູ່ແລ້ວ
1:13 ເອີ ຂ້ອຍເຫັນສົມຄວນວ່າ ບັດຂ້ອຍຍັງຢູ່ໃນຄາບທີ່ອາໄສນີ້ ທີ່ຊິເຕືອນຄວາມ
ຈຳຈື່ຂອງພວກເຈົ້າໄວ້ຢູ່ສະເໝີເຖິງແນວໝູ່ນີ້
1:14 ຍ້ອນຂ້ອຍຮູ້ຢູ່ວ່າ ອີກບໍ່ຊ້າບໍ່ໂດນ ເຮົາກໍຊິຕ້ອງສະລະຄາບຂອງເຮົານີ້ໄປ
ຕາມທີ່ພຣະເຢຊູຄຣິດເຈົ້າຂອງເຮົາໄດ້ດົນໃຈໃຫ້ຂ້ອຍຮູ້ຈັກ
1:15 ຍິ່ງກວ່ານັ້ນອີກ ຂ້ອຍພະຍາຍາມເຕືອນສະຕິຢໍ້າໃຫ້ພວກເຈົ້າຄຶດເຖິງຄຶດ-
ຊວດໃນຂໍ້ຄວາມແນວໝູ່ນີ້ຢູ່ສະເໝີ ຫລັງຈາກຂ້ອຍອອກຈາກໂລກໄປແລ້ວ
1:16 ຍ້ອນວ່າ ພວກເຮົາບໍ່ໄດ້ຕິດຕາມນິທານອັນສະຫລາດທີ່ຖືກກໍ່ຂຶ້ນມາ ຕອນທີ່
ພວກເຮົາໄດ້ບອກເຖິງເລື່ອງລິດທານຸພາບ ກັບການມາຂອງພຣະເຢຊູຄຣິດເຈົ້າ
ຂອງເຮົາ ແຕ່ເຮົາໄດ້ເຫັນບາລະມີຂອງເພິ່ນກັບຕາໂຕເອງ
1:17 ຄື ພຣະເຢຊູ ໄດ້ຮັບກຽດກັບສະຫງ່າລາສີຈາກພຣະເຈົ້າຜູ້ເປັນພໍ່ ຕອນມີ
ພຣະສຸລະສຽງໄດ້ອອກຈາກທີ່ສະຫງ່າລາສີອັນປະເສີດ ມາຍັງ ພຣະເຢຊູ ບອກ-
ວ່າ *"ເຈົ້າລູກທີ່ຮັກແພງຂອງເຮົາເອີຍ ເຮົາຄວນພໍໃຈໃນເຈົ້າຫລາຍ"*
1:18 ກັບວ່າ ຕອນທີ່ພວກເຮົາໄດ້ຍິນພຣະສຸລະສຽງນີ້ດັງກ້ອງອອກມາຈາກສະ-
ຫວັນ ພວກເຮົາກໍໄດ້ຢູ່ກັບ ພຣະເຢຊູ ຢູ່ເທິງພູເຂົາໝ້ອງອັນສັກສິດບໍລິສຸດນັ້ນ

1:19 ແລ້ວ ແຮງຫລາຍກວ່ານັ້ນອີກ ພວກເຮົາມີຄຳທຳນາຍທີ່ພິສູດມາຢ່າງແນ່ນອນ
ໄດ້ແລ້ວ ຊຶ່ງມັນເປັນການດີຄັ້ນພວກເຈົ້າຊິເອົາໃຈໃສ່ໃນຖ້ອຍຄຳນັ້ນ ຄືກັນກັບ
ແສງທີ່ສ່ອງເຂົ້າໄປໃນໝ້ອງດຳມືດ ຈົນກວ່າຊິຮອດແຈ້ງ ແລ້ວດາວປະຈຳຮຸ່ງປາ-
ກົດຂຶ້ນມາໃນຫົວໃຈຂອງພວກເຈົ້າ
1:20 ໂດຍຮູ້ກັນໄວ້ກ່ອນວ່າ ບໍ່ເຄີຍມີຄຳທຳນາຍໃນ ພຣະຄຳ ທີ່ເປັນໄປຕາມຄວາມ
ຄິດເຫັນສ່ວນໂຕຂອງຄົນໃດຄົນໜຶ່ງເລີຍ
1:21 ຄື ຄຳທຳນາຍນັ້ນ ບໍ່ເຄີຍເປັນມາຕາມຈຸດປະສົງຂອງຄົນ ແຕ່ຄົນບໍລິສຸດຂອງ
ພຣະເຈົ້າໄດ້ກ່າວໄວ້ຕາມການຊົງນຳຂອງ ພຣະວິນຍານ

## 2 ເປໂຕ ບົດທີ 2

2:1 ແຕ່ວ່າ ໄດ້ມີຜູ້ພະຍາກອນບໍ່ຈິງເກີດຂຶ້ນຢູ່ຫວ່າງກາງພວກປະຊາຊົນຕອນນັ້ນ
ຕາມທີ່ຊິມີຜູ້ສອນບໍ່ຈິງເກີດຂຶ້ນຢູ່ຫວ່າງກາງພວກເຈົ້າ ແມ່ນຜູ້ທີ່ຊິແອບລີ້ນຳເອົາ
ຄຳສອນບໍ່ຈິງຂອງລັດທິຕ່າງໆ ຮອດປະຕິເສດອົງພຣະຜູ້ເປັນເຈົ້າ ຜູ້ທີ່ໄຖ່ເຂົານັ້ນ
ແລ້ວເຂົາຈັ່ງຊິນຳຄວາມພິນາດຢ່າງກະທັນຫັນມາສູ່ຫົວໂຕເອງ
2:2 ແລ້ວຊິມີຫລາຍຄົນຕິດຕາມເຂົາໄປໃນທາງບາບລະບຽງຂອງເຂົາ ນຳໄປສູ່
ຄວາມພິນາດ ແມ່ນຍ້ອນຄົນພວກນັ້ນເນາະ ທາງແຫ່ງຄວາມຈິງຊິຖືກລົບຫລູ່
ກ່າວຮ້າຍ
2:3 ແລ້ວຍ້ອນໃຈຂີ້ໂລບຂອງເຂົາ ເຂົາຊິຄ້າເອົາກຳໄລຈາກພວກເຈົ້າ ດ້ວຍລູກ
ຫລິ້ນຫລອກລວງຕາມຜົນປະໂຫຍດສ່ວນໂຕຂອງເຂົາ ແຕ່ການພິພາກສາຂອງ
ພວກເຂົານັ້ນ ແມ່ນແຕ່ຄອງຖ້າດົນນານແລ້ວ ຄວາມຈິບຫາຍຂອງເຂົາຊິບໍ່ເນີນ
ຊ້າອີກ
2:4 ຄື ຄັ້ນພຣະເຈົ້າບໍ່ໄດ້ຍົກເວັ້ນພວກເທວະທູດທີ່ໄດ້ເຮັດບາບນັ້ນ ແຕ່ໄດ້ຂັບໄລ່
ມັນລົງໄປສູ່ນະລົກ ລ່າມໄວ້ດ້ວຍໂສ້ແຫ່ງຄວາມມືດ ຈອງຈຳຄຸມຂັງໄວ້ຈົນຮອດມື້
ພິພາກສາ
2:5 ກັບບໍ່ໄດ້ຍົກເວັ້ນຊາວໂລກໃນສະໄໝບູຮານ ແຕ່ໄດ້ໂຜດຊ່ອຍ ໂນເອ ຜູ້ໜຶ່ງ
ໃນແປດຄົນໃຫ້ລອດພົ້ນ ແມ່ນຜູ້ປະກາດຄວາມຊອບທຳ ຕອນທີ່ພຣະເຈົ້າໄດ້
ບັນດານໃຫ້ນ້ຳທ່ວມໂລກ ຂອງຄົນຊົ່ວໃນຍາມນັ້ນ

2:6 ກັບໄດ້ລົງໂທດເມືອງ ໂສໂດມ ກັບເມືອງ ໂກໂມຣາ ນັ້ນໃຫ້ພິນາດໄປເປັນຂີ້ເຖົ່າ
ເພື່ອເປັນ ຕົວຢ່າງໃຫ້ຄົນທັງຫລາຍຕໍ່ໆ ມາ ຜູ້ທີ່ຊິປະກອບການຊີວິດໃນທາງທີ່ບໍ່
ໃຫ້ກຽດພຣະເຈົ້າ
2:7 ແຕ່ໄດ້ຊ່ອຍທ້າວ ໂລດ ໃຫ້ລອດພົ້ນ ແມ່ນຜູ້ຊອບທຳທີ່ທຸກຫລາຍ ຍ້ອນພຶດຕິ-
ກຳສົກກະປົກລາມົກຂອງຄົນຊົ່ວຊ້າເລວຊາມຢູ່ນັ້ນ
2:8 (ດ້ວຍວ່າ ທ້າວ ໂລດ ຜູ້ຊອບທຳນັ້ນ ຊຶ່ງມີທີ່ອາໄສຢູ່ໃນທ່າງກາງພວກນັ້ນ ຄື
ຈິດໃຈອັນຊອບທຳຂອງລາວກໍເປັນທຸກເປັນຮ້ອນມື້ແລ້ວມື້ເລົ່າ ໂດຍຕ້ອງໄດ້ຍິນ
ໄດ້ເຫັນການປະພຶດຊົ່ວ *ທີ່ຜິດກົດຂອງພຣະເຈົ້າ* ຂອງພວກເຂົາ)
2:9 ຈັ່ງຊັ້ນ ອົງພຣະຜູ້ເປັນເຈົ້າສາມາດກູ້ຄົນທີ່ຖວາຍກຽດເພິ່ນ ໃຫ້ລອດພົ້ນຈາກ
ການທົດລອງໄດ້ ກັບຈອງຈຳຄົນບໍ່ເປັນທຳ ກັກໄວ້ເຖິງມື້ພິພາກສາລົງໂທດນັ້ນ
2:10 ຄື ແມ່ນສະເພາະ ຜູ້ຄົນທີ່ດຳເນີນຊີວິດໄປຕາມເນື້ອໜັງ ຕາມຕັນຫາແຫ່ງເພດ
ອັນໂສໂຄກ ລົບຫລູ່ດູໝິ່ນການປົກຄອງ ພວກນີ້ເຫຍື້ອຫຍິ່ງຈອງຫອງ ດື້ດຶງຕາມ
ໃຈໂຕເອງ ບໍ່ເຄົາລົບທີ່ຊິກ່າວປະຈານຜູ້ມີບັນດາສັກ
2:11 ຊຶ່ງ ແມ່ນແຕ່ພວກເທວະທູດ ຜູ້ມີລິດກຳລັງ ທັງມີອຳນາດຫລາຍກວ່າ ກໍຍັງບໍ່
ໄດ້ກ່າວຫາໃສ່ພວກນີ້ຕໍ່ໜ້າອົງພຣະຜູ້ເປັນເຈົ້າເລີຍ
2:12 ແຕ່ວ່າ ຄົນຈຳພວກນັ້ນ ຄືສັດປ່າທີ່ບໍ່ຈັກທົບ ເກີດມາເພື່ອຖືກລ່າ ຈັບໄປຂ້າຖິ້ມ
ຊື່ໆ ຄົນພວກນັ້ນຮູ້ເທົ່າບໍ່ເຖິງສະພາບການ ກ່າວປະຈານແນວເຂົາບໍ່ເຂົ້າໃຈ ຈັ່ງ
ຊິຕ້ອງສູ່ຄວາມພິນາດຕາມທາງເສຍຫາຍຂອງເຂົາເອງ
2:13 ແລ້ວເຂົາຊິຕ້ອງຮັບຄ່າຕອບແທນສົມກັບຄວາມບໍ່ເປັນທຳຂອງໂຕ ຢ່າງຄົນທີ່
ມັກເຮຣາເພີດເພີນກັນໃນຍາມກາງເວັນ ພວກເຂົາເປັນແປ້ວເປັນມົນທິນຊື່ໆ
ເຮຣາເມົາດ້ວຍການຫລອກລວງໂຕເອງ ໃນຂະນະທີ່ເຂົາກິນລ້ຽງຮ່ວມສາມັກຄີ
ກັບພວກເຈົ້າ
2:14 ຕາຂອງພວກເຂົາເຕັມໄປດ້ວຍຄວາມຫລິ້ນຊູ້ລ່ວງປະເວນີ ຈັ່ງບໍ່ສາມາດເຊົາ
ເຮັດບາບໄດ້ເລີຍ ເຂົາວາງກັບດັກໄວ້ໃຫ້ຄົນທີ່ມີຈິດໃຈອ່ອນ ຊຶ່ງໃຈຂອງພວກ-
ເຂົາເກັ່ງໃນທາງຂີ້ໂລບ ເປັນພວກຊົ່ວຊ້າຢູ່ໃຕ້ຄວາມສາບແຊ່ງແລ້ວ

2:15 ເຂົາປະຖິ້ມທາງມັນຖືກມັນແມ່ນ ຫລົງໄປນອກຮອຍນອກທາງ ຄືເຂົາຕິດຕາມ
ທາງຂອງ ບາລາອັມ ແລ້ວ ລູກຊາຍຂອງ ເບໂອ ແມ່ນຜູ້ມັກຜົນງານຂອງແນວ
ບໍ່ເປັນທຳ
2:16 ແຕ່ສ່ວນ ບາລາອັມ ເຂົາຖືກຕໍ່ວ່າຍ້ອນການລະເມີດຂອງເຂົາ ຄືມີໂຕລາຈັ່ງ-
ໄດ້ເວົ້າເປັນສຽງປາກຄົນ ໄດ້ຫ້າມຜູ້ທຳນາຍນັ້ນໃນການຜີບ້າໜ້າດ້ານຂອງເຂົາ
2:17 ຄືຄົນຈຳພວກນີ້ເປັນຄືນ້ຳສ້າງແຫ້ງ ຄືເມກທີ່ຖືກລົມພະຍຸພັດໄຫລໄປມາ ຊຶ່ງມີ
ໝ້ອງມືດທຶບກຽມໄວ້ສະເພາະພວກນີ້ແລ້ວ ຕະຫລອດການເປັນນິດ
2:18 ຄື ບັດພວກເຂົາເວົ້າ ມັນເປັນຄຳອ່ອນຫວານອັນຫວ່າງບໍ່ ຊຶ່ງດ້ວຍຄຳນັ້ນເຂົາ
ລໍ້ເອົາຄົນດ້ວຍຕັນຫາອັນໂສໂຄກທາງເນື້ອໜັງ ແມ່ນຜູ້ທີ່ເຄີຍພົ້ນຈາກຄວາມຜິດ
ທາງຊີວິດເກົ່າຂອງຄົນພວກນັ້ນມາແລ້ວ
2:19 ຂະໜາດເຂົາຮັບປາກສັນຍາວ່າ ຊິຊ່ອຍໃຫ້ພົ້ນການເປັນຂ້າທາດມາສູ່ເສລີ-
ພາບ ໂຕເຂົາກໍຍັງເປັນຂ້າທາດຢູ່ ໂດຍວ່າຜູ້ໃດພ່າຍແພ້ຕໍ່ສິ່ງໃດ ເຂົາກໍເປັນຂ້າ-
ທາດຂອງສິ່ງນັ້ນ
2:20 ຄື ຄັ່ນວ່າ ຫລັງຈາກພວກເຂົາໄດ້ພົ້ນຈາກມົນທິນທາງໂລກນີ້ໄດ້ ດ້ວຍການຮູ້
ພຣະເຢຊູຄຣິດເຈົ້າ ພຣະຜູ້ໂຜດນັ້ນ ແລ້ວຈັ່ງຫັນກັບໄປກ່ຽວຂ້ອງ ພ່າຍແພ້ຕໍ່ແນວ
ເກົ່າອີກ ບັ້ນປາຍຊີວິດເຂົາກໍຮ້າຍແຮງກວ່າເດີມ
2:21 ຄືຄົນພວກນີ້ ມັນຊິເປັນການດີກວ່າສຳລັບເຂົາ ຄັ່ນເຂົາບໍ່ເຄີຍໄດ້ຍິນເຖິງ
ເລື່ອງທາງຊອບທຳມາກ່ອນ ແທນທີ່ຊິຮູ້ຈັກ ແລ້ວຈັ່ງຫັນຫລັງໃສ່ຄຳສັ່ງອັນບໍລິສຸດ
*ເຖິງຂ່າວປະເສີດນັ້ນ* ທີ່ໄດ້ນຳໄປໃຫ້ພວກເຂົາແລ້ວ
2:22 ແຕ່ວ່າ ມັນເປັນໄປກັບພວກນີ້ແລ້ວ ຕາມທີ່ມີ ສຸພາສິດ ອັນຈິງວ່າ "ໝາຫັນໄປ
ກິນຮາກຂອງມັນອີກ" ກັບວ່າ "ໝູພໍອາບນ້ຳໃຫ້ແລ້ວ ກໍຫລົບໄປລຸຍໜອງຂອງ
ມັນອີກ"

## 2 ເປໂຕ ບົດທີ 3

3:1 ພີ່ນ້ອງທີ່ຮັກແພງເອີຍ ບັດນີ້ຂ້ອຍຂຽນຈົດໝາຍສະບັບທີ່ສອງໄປຍັງພວກເຈົ້າ
(ຊຶ່ງໃນສອງສະບັບນີ້ ຂ້ອຍຢາກເຕືອນຄວາມຈຳຂອງໃຈບໍລິສຸດພວກເຈົ້າໄວ້ອີກ)

3:2 ເພື່ອພວກເຈົ້າຊິໄດ້ຈື່ຖ້ອຍຄໍາຂອງພວກຜູ້ເປັນປາກເປັນສຽງຜູ້ບໍລິສຸດ ກັບຈື່
ຄໍາສັ່ງຂອງພວກເຮົາ ຜູ້ເປັນທູດພິເສດຂອງອົງພຣະຜູ້ເປັນເຈົ້າ ພຣະຜູ້ໂຜດນັ້ນ
3:3 ໂດຍຮູ້ກັນໄວ້ກ່ອນວ່າ ໃນຍາມທ້າຍຂອງຍຸກນີ້ ຊິມີພວກຫົວເຍາະເຍີ້ຍເກີດຂຶ້ນ
ມາ ຊຶ່ງພວກນັ້ນດໍາເນີນຊີວິດຕາມຕັນຫາແຫ່ງເພດໂຕເອງ
3:4 ເຂົາເວົ້າວ່າ “ການສະເດັດມາທີ່ເພິ່ນສັນຍາໄວ້ນັ້ນ ຢູ່ໃສດຽວນີ້ ຄືຕັ້ງແຕ່ພໍ່ແຕ່
ບັນພະບຸລຸດໄດ້ລ່ວງຫລັບໄປແລ້ວ ຄູ່ຢ່າງກໍຍັງຄືເກົ່າ ຄືຕັ້ງແຕ່ເລີ່ມແຮກສ້າງໂລກ
ມາ”
3:5 ຄືເຂົາຈົ່ງໃຈລືມຄວາມຈິງວ່າ ຟ້າສະຫວັນອັນເກົ່າແກ່ນັ້ນ ໄດ້ຖືກສ້າງຂຶ້ນມາ
ໂດຍ ພຣະຄໍາ ຂອງພຣະເຈົ້າ ແລ້ວແຜ່ນດິນໄດ້ຂຶ້ນມາອອກຈາກນໍ້າ ຊຶ່ງນໍ້ານັ້ນກໍ
ລ້ອມຮອບຢູ່
3:6 ຊຶ່ງໂລກຢູ່ສະໄໝກ່ອນນັ້ນ ໄດ້ຖືກທໍາລາຍໃຫ້ຈິບຫາຍໄປໂດຍນໍ້າທ່ວມ
3:7 ແຕ່ວ່າ ທ້ອງຟ້າອາກາດ ກັບແຜ່ນດິນໂລກນັ້ນ ຊຶ່ງປະຈຸບັນນີ້ ໄດ້ຮັບການເກັບ
ຮັກສາໄວ້ດ້ວຍ ພຣະຄໍາ ອັນດຽວກັນ ສໍາຮອງໄວ້ສໍາລັບການເຜົາໄຟ ໃນມື້ພິ-
ພາກສາຂອງຄົນຊົ່ວນັ້ນ
3:8 ແຕ່ພີ່ນ້ອງທີ່ຮັກແພງເອີຍ ຢ່າລືມຂໍ້ດຽວນີ້ເດີ້ ວ່າ ສໍາລັບອົງພຣະຜູ້ເປັນເຈົ້ານັ້ນ
ມື້ດຽວຄືໜຶ່ງພັນປີ ແລ້ວໜຶ່ງພັນປີຄືມື້ດຽວ
3:9 ຈັ່ງຊັ້ນ ອົງພຣະຜູ້ເປັນເຈົ້າບໍ່ໄດ້ລ້າຊ້າຕໍ່ ພຣະຄໍາ ສັນຍາຂອງເພິ່ນ ຕາມທີ່ຜູ້
ລາງຄົນຄຶດ ແຕ່ເພິ່ນອົດກັ້ນໃຈໄວ້ມາດົນນານແລ້ວ ຍ້ອນເຫັນແກ່ເຮົາທັງຫລາຍ
ໂດຍວ່າເພິ່ນບໍ່ປະສົງໃຫ້ຜູ້ໜຶ່ງຜູ້ໃດພິນາດເລີຍ ແຕ່ຢາກໃຫ້ຄົນທັງປວງກັບໃຈໃ
ໝ່
3:10 ແຕ່ວ່າ ມື້ຂອງອົງພຣະຜູ້ເປັນເຈົ້າ ຊິມາເຖິງຄືກັນກັບຂະໂມຍແອບເຂົ້າມາໃນ
ຍາມກາງຄືນ ຊຶ່ງໃນມື້ນັ້ນ ທ້ອງຟ້າຊິລ່ວງໄປດ້ວຍສຽງດັ່ງດັງກ້ອງ ກັບທາດທັງ
ໂລກຊິຫລອມສະຫລາຍໄປດ້ວຍຄວາມຮ້ອນຂະໜາດທີ່ສຸດ ແລ້ວແຜ່ນດິນໂລກ
ກັບສິ່ງສາລະພັດທີ່ມີຢູ່ໃນໂລກ ຊິໄໝ້ໄປໝົດ

3:11 ຈັ່ງຊັ້ນ ບັດເຫັນວ່າສັບພະສິ່ງທັງປວງຊິຕ້ອງສະຫລາຍໄປໝົດແບບນີ້ ພວກ
ເຈົ້າຄວນຊິເປັນຄົນແບບໃດ ໃນການໃຊ້ຊີວິດທາງບໍລິສຸດ ກັບການຖວາຍກຽດ
ພຣະເຈົ້າ
3:12 ຈັ່ງຄອຍຖ້າທ່າຢາກເຫັນມື້ຂອງພຣະເຈົ້າມາຮອດໄວໆ ຊຶ່ງໃນມື້ນັ້ນ ທ້ອງຟ້າ
ອາກາດຊິລະລາຍໄປໂດຍໄຟເຜົາ ກັບທາດທັງໂລກຊິຫລອມສະຫລາຍໄປດ້ວຍ
ຄວາມຮ້ອນ ຂະໜາດທີ່ສຸດ
3:13 ຈັ່ງໃດກໍຕາມ ພວກເຮົາຈັ່ງຄອຍຖ້າທ່າທ້ອງຟ້າອາກາດໃໝ່ ກັບແຜ່ນດິນໂລກ
ໃໝ່ ຕາມທີ່ເພິ່ນໄດ້ສັນຍາໄວ້ນັ້ນ ຊຶ່ງໃນນັ້ນ ຊິມີແຕ່ຄວາມຊອບທຳດຳລົງຄອງຢູ່
3:14 ຈັ່ງຊັ້ນ ພວກພີ່ນ້ອງທີ່ຮັກແພງເອີຍ ໃນຂະນະພວກເຈົ້າພວມຄອຍຖ້າທ່າ
ແບບນີ້ຢູ່ ໃຫ້ພະຍາຍາມເປັນຄົນມີຄວາມສະຫງົບສຸກ ບໍ່ມີຈຸດດ່າງມົນທິນ ຫລືທີ່
ຕຳນີ້ຫາຈັບຜິດໄດ້ເລີຍເດີ້ ຕອນເພິ່ນມາພົ້ນມາເຫັນ
3:15 ກັບໃຫ້ພິຈາລະນາເດີ້ ເຖິງການອົດກັ້ນໄວ້ນານຂອງອົງພຣະຜູ້ເປັນເຈົ້າ ຊຶ່ງ
ເປັນຄວາມລອດພົ້ນເພື່ອພວກເຮົາ ຄືກັນກັບທີ່ ໂປໂລ ພີ່ນ້ອງທີ່ຮັກຂອງເຮົາ ໄດ້
ຂຽນໄປຍັງພວກເຈົ້ານຳ ຕາມສະຕິປັນຍາທີ່ພຣະເຈົ້າໂຜດໃຫ້ ລາວ
3:16 ຄືກັບຈົດໝາຍຄູ່ສະບັບຂອງ ລາວ ລາວ ໄດ້ຂຽນກ່າວເຖິງເຫດການນີ້ ຊຶ່ງມີຂໍ້
ລຳເລິກບາງຂໍ້ທີ່ເຂົ້າໃຈຍາກແທ່ ຊຶ່ງມີຜູ້ລາງຄົນທີ່ອ່ອນໃນທາງຮຽນຮູ້ ກັບໃນ
ທາງສະຕິປັນຍາ ໄດ້ບິດເບືອນຄວາມໝາຍຕາມໃຈມັກ ຄືກັນກັບທີ່ພວກເຂົາເຄີຍ
ເຮັດກັບ ພຣະຄຳ ຂໍ້ອື່ນໆ ຈັ່ງເປັນເຫດໃຫ້ເຂົາຊິຕ້ອງພິນາດ
3:17 ຈັ່ງຊັ້ນ ພວກພີ່ນ້ອງທີ່ຮັກແພງເອີຍ ບັດພວກເຈົ້າໄດ້ຮັບຮູ້ມາກ່ອນໃນເລື່ອງນີ້
ໃຫ້ລະວັງໃຫ້ດີເດີ້ ບໍ່ຊັ້ນ ຢ້ານວ່າພວກເຈົ້າ ອາດ ຊິລົ້ມລົງ ຈາກຄວາມໝັ້ນຄົງ
ຂອງພວກເຈົ້າ ຖືກຈູງໄປໃນທາງຜິດທາງເຫັດຂອງພວກຄົນຊົ່ວຊ້າເລວຊາມ
3:18 ແຕ່ວ່າ ໃຫ້ຈະເລີນເຕີບໂຕຂຶ້ນໃນພຣະກະລຸນາທິຄຸນ ກັບໃນຄວາມອ້ອມຮູ້
ເຖິງອົງພຣະຜູ້ເປັນເຈົ້າ ກັບພຣະຜູ້ໂຜດຂອງພວກເຮົາ ຄືອົງ ພຣະເຢຊູຄຣິດ ຂໍ
ໃຫ້ສະຫງ່າລາສີມີແດ່ເພິ່ນ ທັງໃນປະຈຸບັນ ເຖິງຕະຫລອດການເປັນນິດ ອາເມນ

# 1 ໂຢຮັນ

## 1 ໂຢຮັນ ບົດທີ 1

1:1 ຜູ້ນັ້ນທີ່ເປັນຢູ່ຕັ້ງແຕ່ທຳອິດມາ ຊຶ່ງພວກເຮົາເຄີຍໄດ້ຍິນ ເຄີຍໄດ້ເຫັນກັບຕາ
ໂຕເອງ ເຄີຍໄດ້ພິຈາລະນາເບິ່ງ ກັບເຄີຍໄດ້ຈັບໄດ້ບາຍດ້ວຍມືຂອງໂຕເອງ ແມ່ນ
ອົງ ພຣະຄຳ ແຫ່ງຊີວິດນັ້ນເອງ
1:2 ແລ້ວອົງຊີວິດນັ້ນ ໄດ້ປາກົດຢູ່ແລ້ວ ເຮົາຈັ່ງໄດ້ເຫັນ ເລີຍໄດ້ເປັນພະຍານ ກັບ
ໄດ້ປະກາດເຖິງຊີວິດອັນຕະຫລອດໄປເປັນນິດນັ້ນໃຫ້ພວກເຈົ້າຟັງ ຊຶ່ງເພິ່ນໄດ້
ດຳລົງຢູ່ກັບພຣະເຈົ້າຜູ້ເປັນພໍ່ ກັບໄດ້ປາກົດຕໍ່ພວກ ເຮົາທັງຫລາຍນຳ
1:3 ຊຶ່ງເຮົາເຄີຍໄດ້ເຫັນ ກັບເຄີຍໄດ້ຍິນນັ້ນ ພວກເຮົາຈັ່ງປະກາດໃຫ້ພວກເຈົ້າຟັງ
ເພື່ອພວກເຈົ້າຊິໄດ້ຮ່ວມສາມັກຄີທຳກັບພວກເຮົາ ແທ້ຈິງແລ້ວພວກເຮົາມີຄວາມ
ສາມັກຄີທຳກັບພຣະເຈົ້າຜູ້ເປັນພໍ່ ແລ້ວກັບ ພຣະເຢຊູຄຣິດ ຜູ້ເປັນ ພຣະບຸດ ຂອງ
ເພິ່ນນຳ
1:4 ແລ້ວເຮົາຈັ່ງລົງມືຂຽນຂໍ້ຄວາມແນວໝູ່ນີ້ເຖິງພວກເຈົ້າ ເພື່ອວ່າ ຄວາມຍິນດີ
ຂອງເຈົ້າຊິໄດ້ເຕັມປ່ຽມ
1:5 ແລ້ວຂໍ້ຄວາມນີ້ແມ່ນຂໍ້ຄວາມທີ່ເຮົາໄດ້ຍິນຈາກເພິ່ນ ກັບປະກາດແກ່ພວກເຈົ້າ
ຄືວ່າພຣະເຈົ້າເປັນຄວາມສະຫວ່າງ ກັບບໍ່ມີຄວາມມືດຢູ່ໃນເພິ່ນເລີຍ
1:6 ຄັນເຮົາຮັບປາກວ່າ ເຮົາຮ່ວມສາມັກຄີທຳກັບເພິ່ນ ແລ້ວຍັງດຳເນີນຊີວິດຢູ່ໃນ
ຄວາມມືດ ເຮົາກໍຕົວະໂຕເອງ ກັບບໍ່ໄດ້ປະຕິບັດໃຕ້ຢູ່ໃນຄວາມຈິງເລີຍ
1:7 ແຕ່ຄັນເຮົາດຳເນີນຊີວິດຢູ່ໃນຄວາມສະຫວ່າງ ຄືກັນກັບເພິ່ນສະຖິດໃນຄວາມ
ສະຫວ່າງນັ້ນ ເຮົາກໍຮ່ວມ ສາມັກຄີທຳຊຶ່ງກັນແລະກັນ ແລ້ວພຣະໂລຫິດຂອງ-
ພຣະເຢຊູຄຣິດ ພຣະບຸດ ຂອງພຣະເຈົ້າ ໄດ້ຊຳລະລາງເຮົາຈາກບາບໝົດທັງ-
ປວງ
1:8 ແຕ່ວ່າ ຄັນເຮົາຊິວ່າເຮົາບໍ່ມີບາບ ເຮົາກໍຫລອກໂຕເອງຊື່ໆ ແລ້ວຄວາມຈິງຂອງ
ເພິ່ນບໍ່ໄດ້ຢູ່ໃນໂຕເຮົາເລີຍ
1:9 ຄັນເຮົາຍອມຮັບສາລະພາບບາບຂອງເຮົາ ເພິ່ນສັດຊື່ກັບທ່ຽງທຳທີ່ຊິໂຜດໃຫ້
ອະໄພບາບຂອງເຮົາ ກັບຊຳລະລາງເຮົາຈາກແນວບໍ່ເປັນທຳທັງໝົດ

1:10 ແຕ່ ຄັນເຮົາປະຕິເສດວ່າເຮົາບໍ່ໄດ້ເຮັດບາບ ກໍກັບເຮົາຫາວ່າພຣະເຈົ້າຕົວະ
ແລ້ວ ພຣະຄຳ ຂອງເພິ່ນບໍ່ໄດ້ສະຖິດຢູ່ໃນໂຕເຮົາເລີຍ

# 1 ໂຢຮັນ ບົດທີ 2

2:1 ໂອ້ ລູກນ້ອຍໆ ຂອງຂ້ອຍເອີຍ ຂ້ອຍຂຽນຂໍ້ຄວາມແນວໝູ່ນີ້ເຖິງພວກເຈົ້າ ກໍ
ເພື່ອພວກເຈົ້າຊິບໍ່ໄດ້ເຮັດບາບ ແຕ່ຄັ່ນຜູ້ໃດເຮັດບາບ ພວກເຮົາໄດ້ມີຜູ້ຊ່ອຍທີ່
ເປັນສື່ຢູ່ລະຫວ່າງພວກຄົນເຮົາກັບພຣະເຈົ້າຜູ້ເປັນພໍ່ ຄືອົງ ພຣະເຢຊູຄຣິດ ຜູ້
ຊອບທຳນັ້ນເອງ
2:2 ແລ້ວເພິ່ນເປັນຜູ້ລະງັບຄວາມໂມໂຫຂອງພຣະເຈົ້າຍ້ອນຄວາມຜິດບາບຂອງ
ພວກເຮົານັ້ນ ກັບບໍ່ແມ່ນແຕ່ບາບຂອງພວກເຮົາຢ່າງດຽວ ແຕ່ເພື່ອບາບຂອງຊາວ
ໂລກທັງໝົດພ້ອມນຳ
2:3 ແລ້ວເຮົາໝັ້ນໃຈໃນແນວນີ້ວ່າ ເຮົາຮູ້ຈັກນຳເພິ່ນ ຄັ່ນເຮົາຮັກສາຄຳສັ່ງຂອງ
ເພິ່ນ
2:4 ແລ້ວຜູ້ໃດທີ່ວ່າ “ຂ້ອຍຮູ້ຈັກນຳເພິ່ນ” ແຕ່ບໍ່ໄດ້ຮັກສາຄຳສັ່ງຂອງເພິ່ນ ຜູ້ນັ້ນກໍ
ເປັນຄົນຕົວະ ແລ້ວຄວາມຈິງຂອງເພິ່ນບໍ່ໄດ້ສະຖິດຢູ່ໃນໂຕເຂົາເລີຍ
2:5 ແຕ່ຜູ້ໃດທີ່ຮັກສາ ພຣະຄຳ ຂອງເພິ່ນ ຄວາມຮັກຂອງພຣະເຈົ້າພວມຈະເລີນຢູ່-
ໃນຜູ້ນັ້ນອິຫລີຢ່າງສົມບູນແບບ ແລ້ວດ້ວຍປະການນີ້ເນາະ ພວກເຮົາຈັ່ງຮູ້ວ່າເຮົາ
ຢູ່ໃນເພິ່ນແລ້ວ
2:6 ແລ້ວຜູ້ທີ່ເວົ້າວ່າໂຕເອງໄດ້ສະຖິດຢູ່ໃນເພິ່ນ ຜູ້ນັ້ນຄວນດຳເນີນຕາມແນວທາງ
ຄືກັນກັບທີ່ພຣະອົງດຳເນີນຢູ່ຫັ້ນ
2:7 ພີ່ນ້ອງທັງຫລາຍເອີຍ ຂ້ອຍບໍ່ໄດ້ຂຽນຄຳສັ່ງໃໝ່ເຖິງພວກເຈົ້າດອກ ແຕ່ເປັນ
ຄຳສັ່ງເກົ່າ ຊຶ່ງພວກເຈົ້າໄດ້ມີຢູ່ຕັ້ງແຕ່ທຳອິດແລ້ວ ຄືຄຳສັ່ງເກົ່ານັ້ນກໍເປັນຖ້ອຍ-
ຄຳຊຶ່ງພວກເຈົ້າໄດ້ຍິນຕັ້ງແຕ່ທຳອິດມາ
2:8 ອີກເທື່ອໜຶ່ງ ຂ້ອຍຂຽນຄຳສັ່ງໃໝ່ມາຍັງພວກເຈົ້າ ຊຶ່ງແນວນີ້ເປັນຄວາມຈິງ
ທັງໃນເພິ່ນກັບໃນພວກເຈົ້ານຳ ໂດຍວ່າ ຄວາມມືດນັ້ນພວມຊິລ່ວງໄປແລ້ວ ກັບ
ຄວາມສະຫວ່າງອັນແທ້ຈິງພວມສ່ອງແສງຢູ່ແລ້ວ

2:9 ຜູ້ໃດທີ່ເວົ້າວ່າໂຕເອງດຳເນີນຢູ່ໃນຄວາມສະຫວ່າງ ແຕ່ຍັງຊັງພີ່ນ້ອງຂອງເຂົາ
ຜູ້ນັ້ນກໍຍັງຢູ່ໃນຄວາມມືດຈົນຮອດບັດນີ້
2:10 ແຕ່ຜູ້ທີ່ຮັກພີ່ນ້ອງຂອງໂຕເອງໄດ້ດຳເນີນຢູ່ໃນຄວາມສະຫວ່າງແລ້ວ ແລ້ວບໍ່
ມີເຫດໃຫ້ສະດຸດໃນຜູ້ນັ້ນເລີຍ
2:11 ແຕ່ຜູ້ທີ່ຊັງພີ່ນ້ອງຂອງໂຕເອງ ຜູ້ນັ້ນກໍຍັງຢູ່ໃນຄວາມມືດ ແລ້ວກໍຍັງດຳເນີນ
ຊີວິດຢູ່ໃນຄວາມມືດ ໂດຍບໍ່ຮູ້ວ່າໂຕເອງພວມຊິໄປທາງໃດ ຍ້ອນວ່າຄວາມມືດ
ນັ້ນໄດ້ເຮັດໃຫ້ຕາຂອງເຂົາບອດໄປແລ້ວ
2:12 ລູກນ້ອຍໆ ເອີຍ ຂ້ອຍຂຽນຈົດໝາຍມາຍັງພວກເຈົ້າ ຍ້ອນວ່າບາບຂອງເຈົ້າ
ໄດ້ຮັບການອະໄພແລ້ວ ຍ້ອນເຫັນແກ່ພຣະນາມຂອງເພິ່ນ
2:13 ພວກຜູ້ເປັນພໍ່ເອີຍ ຂ້ອຍຂຽນຈົດໝາຍມາຍັງພວກເຈົ້າ ຍ້ອນພວກເຈົ້າໄດ້ຮູ້-
ຈັກອົງຜູ້ນັ້ນມາແລ້ວ ຄືຜູ້ເພິ່ນດຳລົງຢູ່ຕັ້ງແຕ່ທຳອິດມາ ພວກໜຸ່ມໆ ເອີຍ ຂ້ອຍ
ຂຽນຈົດໝາຍມາຍັງພວກເຈົ້າ ຍ້ອນພວກເຈົ້າມີໄຊຕໍ່ເຈົ້າ ພະຍາມານ ຮ້າຍນັ້ນ
ແລ້ວ ລູກນ້ອຍໆ ເອີຍ ຂ້ອຍຂຽນຈົດໝາຍມາຍັງພວກເຈົ້າ ຍ້ອນພວກເຈົ້າໄດ້
ຮູ້ຈັກພຣະເຈົ້າຜູ້ເປັນພໍ່ມາແລ້ວ
2:14 ສ່ວນພວກເຈົ້າຜູ້ເປັນພໍ່ນັ້ນ ຂ້ອຍໄດ້ຂຽນຈົດໝາຍມາຍັງພວກເຈົ້າຍ້ອນພວກ
ເຈົ້າໄດ້ຮູ້ຈັກກັນກັບອົງຜູ້ນັ້ນແລ້ວ ຜູ້ເພິ່ນທີ່ດຳລົງຢູ່ຕັ້ງແຕ່ທຳອິດມາ ສ່ວນພວກ
ເຈົ້າຜູ້ເປັນໜຸ່ມນັ້ນ ຂ້ອຍຂຽນຈົດໝາຍມາຍັງພວກເຈົ້າ ຍ້ອນພວກເຈົ້າແຂງແຮງ
ດີ ກັບ ພຣະຄຳ ຂອງພຣະເຈົ້າດຳລົງຢູ່ໃນພວກເຈົ້າ ແລ້ວພວກເຈົ້າໄດ້ມີໄຊຕໍ່
ເຈົ້າ ພະຍາມານ ຮ້າຍນຳ
2:15 ຢ່າຮັກໂລກກັບແນວທີ່ຢູ່ໃນໂລກເດີ້ ຄັນຜູ້ໃດຮັກໂລກ ຄວາມຮັກຂອງພຣະ-
ເຈົ້າຜູ້ເປັນພໍ່ບໍ່ໄດ້ສະຖິດຢູ່ໃນຜູ້ນັ້ນເລີຍ
2:16 ຍ້ອນວ່າ ໝົດຄູ່ອັນຄູ່ແນວທີ່ຢູ່ໃນໂລກນີ້ ຄືຕັນຫາທາງເນື້ອໜັງ ຕັນຫາທາງ
ຕາ ກັບຄວາມເຫຍື້ອຫຍິ່ງຈອງຫອງທາງຊີວິດ ບໍ່ໄດ້ມາຈາກພຣະເຈົ້າຜູ້ເປັນພໍ່
ແຕ່ເປັນຂອງຝ່າຍໂລກີລັກສະນະນີ້
2:17 ແລ້ວໂລກນີ້ພວມຜ່ານພົ້ນລ່ວງໄປ ພ້ອມທັງແນວຂອງມັນທີ່ຍົວະເຍົ້າລໍ້ໃຈນັ້ນ
ແຕ່ຜູ້ທີ່ເຮັດຕາມພຣະປະສົງຂອງພຣະເຈົ້າ ກໍດຳລົງຢູ່ຕະຫລອດເປັນນິດ

2:18 ລູກນ້ອຍໆ ທັງຫລາຍເອີຍ ນີ້ກໍເປັນໄລຍະສຸດທ້າຍ ແລ້ວຕາມທີ່ພວກເຈົ້າ
ເຄີຍໄດ້ຍິນມາ ປະຕິປັກຕໍ່ພຣະຄຣິດຜູ້ນັ້ນພວມຊິມາ ແລ້ວແມ່ນແຕ່ບັດນີ້ ກໍຍັງມີ
ພວກປະຕິປັກຕໍ່ ພຣະຄຣິດ ຫລາຍທີ່ມາແລ້ວ ຈັ່ງຊັ້ນ ເຮົາຈັ່ງຮູ້ກັນວ່າ ຍາມນີ້ເປັນ
ໄລຍະສຸດທ້າຍແລ້ວ
2:19 ແລ້ວພວກເຂົານັ້ນ ໄດ້ອອກຈາກພວກເຮົາໄປ ຊຶ່ງເຂົາບໍ່ແມ່ນພວກເຮົາຢູ່ແລ້ວ
ຍ້ອນວ່າຄັ່ນເຂົາເປັນພວກຂອງເຮົາ ເຂົາຊິຢູ່ກັບພວກເຮົາຕໍ່ໄປ ແຕ່ພວກເຂົາໄດ້
ອອກໄປແລ້ວ ກໍເພື່ອຊິເຫັນໄດ້ຊັດວ່າ ພວກເຂົາແມ່ນແຕ່ຄົນດຽວກໍບໍ່ແມ່ນພວກ
ຂອງເຮົາດອກ
2:20 ແຕ່ພວກເຈົ້າໄດ້ຮັບການເຈີມຈາກຜູ້ບໍລິສຸດຜູ້ນັ້ນມາແລ້ວ ພວກເຈົ້າຈັ່ງຮູ້ຄູ່
ຢ່າງໆ
2:21 ຂ້ອຍບໍ່ໄດ້ຂຽນມາຍັງພວກເຈົ້າ ຍ້ອນພວກເຈົ້າບໍ່ທັນຮູ້ຄວາມຈິງ ແຕ່ຍ້ອນວ່າ
ພວກເຈົ້າຮູ້ຢູ່ແລ້ວ ກັບຮູ້ກັນວ່າແນວຕົວະບໍ່ໄດ້ມາຈາກຄວາມຈິງເລີຍ
2:22 ແມ່ນໃຜເປັນຜູ້ຕົວະນອກຈາກຜູ້ທີ່ປະຕິເສດວ່າ ພຣະເຢຊູ ບໍ່ແມ່ນ ພຣະຄຣິດ
ນັ້ນ ແລ້ວຜູ້ນັ້ນເປັນຝ່າຍປະຕິປັກທີ່ປະຕິເສດພຣະເຈົ້າຜູ້ເປັນພໍ່ ພ້ອມທັງປະຕິ-
ເສດ ພຣະບຸດ ນໍາ
2:23 ຜູ້ໃດທີ່ປະຕິເສດ ພຣະບຸດ ຜູ້ນັ້ນກໍບໍ່ມີພຣະເຈົ້າຜູ້ເປັນພໍ່ດ້ວຍຊໍ້າ ແຕ່ຜູ້ໃດທີ່
ຮັບ ພຣະບຸດ ຜູ້ນັ້ນກໍມີພຣະເຈົ້າຜູ້ເປັນພໍ່ພ້ອມນໍາ
2:24 ຈັ່ງຊັ້ນ ໃຫ້ຂໍ້ຄວາມທີ່ເຈົ້າໄດ້ຍິນມາຕັ້ງແຕ່ທໍາອິດນັ້ນ ດໍາລົງຢູ່ໃນເຈົ້າເດີ້ ຄື
ຄັ່ນຂໍ້ຄວາມທີ່ເຈົ້າໄດ້ຍິນມາຕັ້ງແຕ່ທໍາອິດ ດໍາລົງຢູ່ກັບເຈົ້າແລ້ວ ເຈົ້າກໍຊິໝັ້ນຄົງ
ຢູ່ໃນ ພຣະບຸດ ພ້ອມກັບຢູ່ໃນພຣະເຈົ້າຜູ້ເປັນພໍ່ນໍາ
2:25 ນີ້ເນາະເປັນຄໍາໝັ້ນສັນຍາທີ່ເພິ່ນໄດ້ສັນຍາວ່າຊິໃຫ້ເຮົາ ຄືຊີວິດອັນຕະ-
ຫລອດໄປເປັນນິດ
2:26 ຂ້ອຍຂຽນຂໍ້ຄວາມນີ້ມາຍັງເຈົ້າ ກ່ຽວກັບຄົນພວກນັ້ນທີ່ພະຍາຍາມລໍ້ລວງ
ພວກເຈົ້າ
2:27 ແຕ່ການເຈີມທີ່ພວກເຈົ້າໄດ້ຮັບຈາກເພິ່ນນັ້ນ ໄດ້ດໍາລົງຢູ່ໃນພວກເຈົ້າ ພວກ
ເຈົ້າຈັ່ງບໍ່ຈໍາເປັນຊິຕ້ອງໃຫ້ມີໃຜສອນພວກເຈົ້າ ຍ້ອນວ່າການເຈີມນັ້ນໄດ້ສອນ

ເຈົ້າເຖິງໝົດທຸກຢ່າງ ເປັນຄວາມຈິງ ບໍ່ແມ່ນຄວາມບໍ່ຈິງ ແລ້ວທີ່ການເຈີມນັ້ນໄດ້
ສອນພວກເຈົ້າມາແລ້ວຈັ່ງໃດ ເຈົ້າກໍໝັ້ນຄົງຢູ່ໃນເພິ່ນຈັ່ງຊັ້ນ
2:28 ແຕ່ບັດນີ້ ລູກນ້ອຍໆທັງຫລາຍເອີຍ ໃຫ້ດຳລົງຢູ່ໃນເພິ່ນ ເພື່ອບັດເພິ່ນມາປາ-
ກົດ ພວກເຮົາຊິໄດ້ມີໃຈໝັ້ນຄົງ ຈັ່ງບໍ່ມີຄວາມລະອາຍຕໍ່ໜ້າເພິ່ນບັດເພິ່ນມາ
2:29 ຄັ່ນພວກເຈົ້າຮູ້ວ່າ ເພິ່ນເປັນຜູ້ຊອບທຳ ພວກເຈົ້າກໍໄດ້ຮູ້ວ່າ ທຸກຄົນທີ່ປະຕິບັດ
ຕາມຄວາມຊອບທຳນັ້ນ ແມ່ນຜູ້ທີ່ເກີດຈາກເພິ່ນແລ້ວ

# 1 ໂຢຮັນ ບົດທີ 3

3:1 ນີ້ແຫລະ ແມ່ນຄວາມຮັກແບບໃດທີ່ພຣະເຈົ້າຜູ້ເປັນພໍ່ ຈັ່ງໂຜດໃຫ້ພວກເຮົາ ທີ່
ວ່າເຮົາໄດ້ຊື່ວ່າ “ເປັນລູກໆ ຂອງພຣະເຈົ້າ” ຊຶ່ງເປັນເຫດທີ່ໂລກບໍ່ຮູ້ຈັກພວກເຮົາ
ຍ້ອນວ່າໂລກບໍ່ຮູ້ຈັກເພິ່ນ
3:2 ພີ່ນ້ອງທີ່ຮັກເອີຍ ບັດນີ້ພວກເຮົາທັງຫລາຍເປັນລູກໆ ຂອງພຣະເຈົ້າແລ້ວ ແຕ່
ມັນຍັງບໍ່ທັນປາກົດຊັດເຈນ ວ່າພວກເຮົາຊິເປັນແບບໃດ ແຕ່ເຮົາຮູ້ຢູ່ແລ້ວວ່າ ບັດ
ເພິ່ນລົງມາປາກົດແລ້ວ ພວກເຮົາຊິເປັນຄືເພິ່ນ ໂດຍວ່າ ເຮົາຊິເຫັນເພິ່ນໃນສະ-
ພາບຕາມທີ່ເພິ່ນເປັນຢູ່
3:3 ແລ້ວທຸກຄົນທີ່ມີຄວາມຫວັງແນວນີ້ໃນເພິ່ນ ໄດ້ຮັກສາໂຕເອງໄວ້ໃຫ້ບໍລິສຸດ ຄື-
ກັນກັບທີ່ເພິ່ນເປັນຜູ້ບໍລິສຸດນັ້ນ
3:4 ໂດຍວ່າ ຜູ້ໃດທີ່ເຮັດບາບ ກໍໄດ້ລ່ວງລະເມີດກົດບັນຍັດ *ຂອງພຣະເຈົ້າ* ຄື
ຄວາມຜິດບາບນັ້ນ ເປັນການຝ່າຝືນກົດບັນຍັດ
3:5 ພວກເຈົ້າກໍຮູ້ຢູ່ແລ້ວວ່າ ພຣະເຢຊູ ໄດ້ລົງມາປາກົດໃນສະພາບຄົນ ເພື່ອນຳ
ບາບຂອງຄົນເຮົາທັງຫລາຍໃຫ້ອອກໄປ ແຕ່ວ່າບາບໃນໂຕເພິ່ນເອງກໍບໍ່ມີເລີຍ
3:6 ສ່ວນຜູ້ໃດທີ່ດຳເນີນຢູ່ໃນເພິ່ນ ຜູ້ນັ້ນບໍ່ໄດ້ເຮັດບາບ ແລ້ວສ່ວນຜູ້ທີ່ເຮັດບາບ
ນັ້ນ ສະແດງວ່າບໍ່ເຄີຍເຫັນເພິ່ນ ກັບບໍ່ຮູ້ຈັກເພິ່ນນຳ
3:7 ລູກນ້ອຍໆ ເອີຍ ຢ່າຍອມໃຫ້ໃຜລໍ້ລວງເຈົ້າໃຫ້ຫລົງ ຜູ້ທີ່ເຮັດໃນທາງຄວາມດີ
ຄວາມມັກກໍເປັນຜູ້ຊອບທຳ ຄືກັນກັບເພິ່ນເປັນຜູ້ຊອບທຳ

3:8 ແຕ່ຜູ້ທີ່ເຮັດບາບກໍມາຈາກ ພະຍາມານ ຍ້ອນວ່າ ພະຍາມານ ໄດ້ເຮັດບາບຕັ້ງ
ແຕ່ທຳອິດມາ ແມ່ນຍ້ອນນີ້ເອງ ພຣະບຸດ ຂອງພຣະເຈົ້າໄດ້ມາປາກົດ ເພື່ອທຳ-
ລາຍ ກິດຈະການ ຂອງ ພະຍາມານ
3:9 ຜູ້ໃດເກີດໃໝ່ຈາກພຣະເຈົ້າແລ້ວ ຜູ້ນັ້ນບໍ່ໄດ້ *ຢູ່ໃນບາບຕໍ່ໄປ* ຍ້ອນ *ພຣະວິນ-
ຍານ* ຂອງເພິ່ນດຳລົງຢູ່ໃນຜູ້ນັ້ນ ແລ້ວຜູ້ນັ້ນ *ຢູ່ໃນບາບຕໍ່ໄປ* ບໍ່ໄດ້ເລີຍ ຍ້ອນເຂົາ
ເກີດໃໝ່ຈາກພຣະເຈົ້າ
3:10 ໃນນີ້ ຜູ້ເປັນລູກຂອງພຣະເຈົ້າ ກັບຜູ້ເປັນລູກຂອງ ພະຍາມານ ໄດ້ປາກົດ
ອອກຈາກກັນ ຄືຜູ້ໃດທີ່ບໍ່ໄດ້ເຮັດແນວເປັນທຳ ຜູ້ນັ້ນບໍ່ໄດ້ມາຈາກພຣະເຈົ້າ ແລ້ວ
ຜູ້ທີ່ບໍ່ຮັກພີ່ນ້ອງຂອງໂຕກໍຄືກັນ
3:11 ນີ້ກໍເປັນຂໍ້ຄວາມທີ່ພວກເຈົ້າໄດ້ຍິນມາຕັ້ງແຕ່ທຳອິດ ທີ່ວ່າ ພວກເຮົາຄວນຮັກ
ຊຶ່ງກັນແລະກັນ
3:12 ຢ່າເປັນຄືທ້າວ ກາອິນ ຜູ້ທີ່ມາຈາກ ພະຍາມານ ຮ້າຍນັ້ນ ຈັ່ງໄດ້ຂ້ານ້ອງຊາຍ
ຂອງໂຕເອງ ແລ້ວເປັນຫຍັງເຂົາຈັ່ງຂ້ານ້ອງຊາຍ ກໍຍ້ອນການເຮັດຂອງອ້າຍ ກາ-
ອິນ ຊົ່ວ ແຕ່ການເຮັດຂອງນ້ອງກໍເປັນທີ່ມັກ *ຕໍ່ພຣະເຈົ້າ*
3:13 ພີ່ນ້ອງຂອງຂ້ອຍເອີຍ ຢ່າແປກໃຈເປັນຕາງຶດ ຄັ່ນໂລກນີ້ຊັງພວກເຈົ້າ
3:14 ພວກເຮົາຮູ້ວ່າ ເຮົາໄດ້ພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ ຍ້ອນວ່າ ເຮົາຮັກ
ພີ່ນ້ອງ ຜູ້ໃດທີ່ບໍ່ຮັກພີ່ນ້ອງຂອງໂຕ ຜູ້ນັ້ນຍັງດຳລົງຢູ່ໃນສະພາບຕາຍ
3:15 ຄື ຜູ້ໃດທີ່ຊັງພີ່ນ້ອງຂອງໂຕ ຜູ້ນັ້ນຄືເປັນຄາດຕະກອນ ແລ້ວພວກເຈົ້າຮູ້ແລ້ວ
ວ່າ ບໍ່ມີຄາດຕະກອນຄົນໃດທີ່ມີຊີວິດອັນຕະຫລອດໄປເປັນນິດດຳລົງຢູ່ໃນໂຕ
ເຂົາເລີຍ
3:16 ໂດຍອັນນີ້ເນາະ ເປັນທາງທີ່ເຮົາຮູ້ກັນເຖິງຄວາມຮັກຂອງພຣະເຈົ້າໄດ້ ຍ້ອນ
ວ່າ ເພິ່ນໄດ້ຍອມວາງຊີວິດຂອງເພິ່ນລົງເພື່ອພວກເຮົາ ຈັ່ງຊັ້ນພວກເຮົາຄວນຊິ
ວາງຊີວິດຂອງເຮົາລົງເພື່ອພີ່ນ້ອງ
3:17 ແຕ່ຄັ່ນຜູ້ໃດມີຊັບສົມບັດທາງໂລກນີ້ ແລ້ວເຫັນພີ່ນ້ອງຂອງໂຕທຸກຍາກລຳ-
ບາກ ແຕ່ປິດໃຈໄວ້ບໍ່ຍອມຊ່ອຍເຂົາ ຄວາມຮັກຂອງພຣະເຈົ້າຊິດຳລົງຢູ່ໃນຜູ້ນັ້ນ
ໄດ້ຈັ່ງໃດ

3:18 ລູກນ້ອຍໆ ທັງຫລາຍຂອງຂ້ອຍເອີຍ ຢ່າໃຫ້ພວກເຮົາຮັກແພງກັນດ້ວຍ
ຖ້ອຍຄຳຈາກປາກຊື່ໆ ແຕ່ດ້ວຍການເຮັດກັບຄວາມຈິງ
3:19 ໂດຍອັນນີ້ເນາະ ພວກເຮົາຮູ້ໄດ້ວ່າ ເຮົາຢູ່ຝ່າຍຄວາມຈິງ ຈັ່ງມີຄວາມໝັ້ນໃຈ
ແນ້ວແນ່ຕໍ່ໜ້າເພິ່ນ
3:20 ຍ້ອນວ່າ ຄັ່ນໃຈຂອງເຮົາຕັດສິນລົງໂທດໂຕເອງ ພຣະເຈົ້າເປັນໃຫຍ່ກວ່າໃຈ
ຂອງເຮົາ ກັບເພິ່ນຮູ້ຈັກໝົດຄູ່ຢ່າງ
3:21 ພີ່ນ້ອງທີ່ຮັກເອີຍ ຄັ່ນໃຈຂອງເຮົາບໍ່ໄດ້ຕັດສິນລົງໂທດໂຕເອງ ເຮົາມີຄວາມ-
ໝັ້ນໃຈຕໍ່ໜ້າພຣະເຈົ້າ
3:22 ແລ້ວເຮົາຊິຂໍແນວໜຶ່ງແນວໃດກໍຕາມ ເຮົາຊິໄດ້ແນວນັ້ນຈາກເພິ່ນ ຍ້ອນວ່າ
ເຮົາເບິ່ງແຍງຮັກສາຄຳສັ່ງຂອງເພິ່ນ ກັບເຮັດຕາມແນວໝູ່ນັ້ນອັນເປັນທີ່ຄວນພໍ-
ໃຈໃນສາຍຕາຂອງເພິ່ນ
3:23 ແລ້ວນີ້ກໍເປັນຄຳສັ່ງຂອງເພິ່ນ ວ່າຄົນເຮົາທັງຫລາຍຄວນເຊື່ອໃນພຣະນາມ
ຂອງ ພຣະເຢຊູຄຣິດ ພຣະບຸດ ຂອງເພິ່ນ ກັບຮັກຊຶ່ງກັນແລະກັນ ຕາມທີ່ເພິ່ນໄດ້
ສັ່ງໄວ້ກັບເຮົາແລ້ວ
3:24 ບັດນີ້ ຜູ້ຄົນທີ່ຮັກສາຄຳສັ່ງຂອງເພິ່ນ ກໍດຳເນີນຢູ່ໃນເພິ່ນ ກັບເພິ່ນສະຖິດຢູ່-
ໃນຜູ້ນັ້ນ ດ້ວຍເຫດນີ້ເນາະ ເຮົາຈັ່ງຮູ້ວ່າເພິ່ນໄດ້ສະຖິດຢູ່ໃນເຮົາ ໂດຍທາງ ພຣະ-
ວິນຍານ ຊຶ່ງເພິ່ນໄດ້ໃຫ້ກັບພວກເຮົາຢູ່ແລ້ວ

## 1 ໂຢຮັນ ບົດທີ 4

4:1 ພີ່ນ້ອງທີ່ຮັກເອີຍ ຢ່າຫລົງເຊື່ອພວກວິນຍານທັງຫລາຍ ແຕ່ໃຫ້ພິສູດວິນຍານ
ຕ່າງໆ ວ່າມາຈາກພຣະເຈົ້າຫລືບໍ່ ຍ້ອນວ່າ ມີຜູ້ພະຍາກອນບໍ່ຈິງຂະໜາດຫລາຍ
ທີ່ຫາວ່າມາຈາກພຣະເຈົ້າ ໄດ້ອອກທ່ຽວໄປມາໃນໂລກແລ້ວ
4:2 ໂດຍອັນນີ້ເນາະ ພວກເຈົ້າຊິເບິ່ງ ພຣະວິນຍານ ຂອງພຣະເຈົ້າອອກໄດ້ເລີຍ ຄື
ຄູ່ວິນຍານທີ່ຍອມຮັບປາກວ່າ ພຣະເຢຊູຄຣິດ ໄດ້ລົງມາໃນສະພາບເປັນໂຕຄົນ
ແລ້ວ ວິນຍານນັ້ນໄດ້ມາຈາກພຣະເຈົ້າ

4:3 ກັບວິນຍານໃດທີ່ບໍ່ຍອມຮັບວ່າ ພຣະເຢຊູຄຣິດ ໄດ້ມາໃນສະພາບເປັນໂຕຄົນ
ແລ້ວ ວິນຍານນັ້ນບໍ່ໄດ້ມາຈາກພຣະເຈົ້າເລີຍ ແຕ່ເປັນວິນຍານປະຕິປັກ ພຣະ-
ຄຣິດ ຊຶ່ງພວກເຈົ້າໄດ້ຍິນວ່າຊິມາ ແລ້ວບັດນີ້ມາຢູ່ໃນໂລກແລ້ວ
4:4 ລູກນ້ອຍໆ ທັງຫລາຍເອີຍ ພວກເຈົ້າຢູ່ຝ່າຍພຣະເຈົ້າ ຈັ່ງມີໄຊຕໍ່ວິນຍານແນວ
ໝູ່ນັ້ນແລ້ວ ຍ້ອນວ່າເພິ່ນຜູ້ສະຖິດຢູ່ໃນພວກເຈົ້າເປັນໃຫຍ່ກວ່າຜູ້ນັ້ນທີ່ຢູ່ໃນໂລກ
4:5 ວິນຍານແນວໝູ່ນັ້ນເປັນຝ່າຍໂລກີ ຈັ່ງຊັ້ນ ມັນຈັ່ງເວົ້າຕາມແນວທີ່ໂລກນິຍົມ
ແລ້ວໂລກກໍຟັງມັນ
4:6 ພວກເຮົາທັງຫລາຍເປັນຝ່າຍພຣະເຈົ້າ ແລ້ວຜູ້ທີ່ຮູ້ຈັກພຣະເຈົ້າກໍຍອມຟັງເຮົາ
ແຕ່ຜູ້ທີ່ບໍ່ໄດ້ຢູ່ຝ່າຍພຣະເຈົ້າກໍບໍ່ຍອມຟັງເຮົາ ຈັ່ງຊີ້ເນາະ ພວກເຮົາທັງຫລາຍຈັ່ງ
ຮູ້ຈັກວິນຍານແຫ່ງຄວາມຈິງ ກັບວິນຍານແຫ່ງຄວາມບໍ່ຈິງ
4:7 ພີ່ນ້ອງທີ່ຮັກເອີຍ ຂໍໃຫ້ເຮົາຮັກຊຶ່ງກັນແລະກັນ ຍ້ອນວ່າຄວາມຮັກມາຈາກ
ພຣະເຈົ້າ ກັບຄູ່ຄົນທີ່ຮັກກໍໄດ້ເກີດຈາກພຣະເຈົ້າ ກັບໄດ້ຮູ້ຈັກພຣະເຈົ້ານຳ
4:8 ຜູ້ທີ່ບໍ່ມີຄວາມຮັກ ຜູ້ນັ້ນບໍ່ໄດ້ຮູ້ຈັກພຣະເຈົ້າເລີຍ ຍ້ອນວ່າ ພຣະເຈົ້າເປັນຄວາມ
ຮັກ
4:9 ໃນນີ້ເນາະ ຄວາມຮັກຂອງພຣະເຈົ້າໄດ້ປາກົດຕໍ່ພວກເຮົາທັງຫລາຍ ໂດຍການ
ໃຊ້ ພຣະບຸດ ອົງດຽວຂອງເພິ່ນເຂົ້າມາໃນໂລກ ເພື່ອພວກເຮົາທັງຫລາຍຊິດຳລົງ
ຊີວິດໄດ້ໂດຍທາງ ພຣະບຸດ ນັ້ນ
4:10 ໃນນີ້ເນາະເປັນຄວາມຮັກ ບໍ່ແມ່ນວ່າ ພວກເຮົາຮັກພຣະເຈົ້າກ່ອນ ແຕ່ວ່າເພິ່ນ
ໄດ້ຮັກຄົນເຮົາກ່ອນ ກັບໄດ້ໃຊ້ ພຣະບຸດ ຂອງເພິ່ນລົງມາ ເພື່ອເປັນຜູ້ລະງັບ
ຄວາມໂມໂຫຂອງພຣະເຈົ້າຜູ້ເປັນພໍ່
4:11 ພີ່ນ້ອງທີ່ຮັກເອີຍ ຄັ່ນພຣະເຈົ້າໄດ້ຮັກພວກເຮົາທັງຫລາຍຈັ່ງຊີ້ມາແລ້ວ ພວກ
ເຮົາຄວນຊິຮັກຊຶ່ງກັນແລະກັນຄືກັນ
4:12 ບໍ່ມີໃຜເຄີຍເຫັນພຣະເຈົ້າເລີຍ ຄັ່ນພວກເຮົາທັງຫລາຍຮັກຊຶ່ງກັນແລະກັນ
ພຣະເຈົ້າກໍໄດ້ສະຖິດຢູ່ໃນພວກເຮົາ ກັບຄວາມຮັກຂອງເພິ່ນໄດ້ເຖິງທີ່ສົມບູນ
ແບບຢູ່ໃນເຮົາແລ້ວ

4:13 ໂດຍນີ້ເນາະ ພວກເຮົາທັງຫລາຍຈັ່ງຮູ້ວ່າເຮົາດຳເນີນຢູ່ໃນເພິ່ນ ກັບເພິ່ນສະ-
ຖິດຢູ່ໃນພວກເຮົາ ຍ້ອນວ່າ ເພິ່ນໄດ້ໃຫ້ ພຣະວິນຍານ ຂອງເພິ່ນມາຢູ່ນຳເຮົາ
ແລ້ວ
4:14 ແລ້ວພວກເຮົາທັງຫລາຍໄດ້ເຫັນ ກັບເປັນພະຍານໄດ້ວ່າ ພຣະເຈົ້າຜູ້ເປັນພໍ່
ໄດ້ໃຊ້ ພຣະບຸດ ລົງມາໃຫ້ເປັນພຣະຜູ້ໂຜດຂອງໂລກແລ້ວ
4:15 ຜູ້ໃດຍອມຮັບວ່າ ພຣະເຢຊູ ເປັນ ພຣະບຸດ ຂອງພຣະເຈົ້າ ພຣະເຈົ້າກໍໄດ້ສະ-
ຖິດຢູ່ໃນຄົນນັ້ນ ກັບຄົນນັ້ນສະຖິດຢູ່ໃນພຣະເຈົ້າ
4:16 ແລ້ວພວກເຮົາຈັ່ງໄດ້ຮູ້ ກັບໄດ້ເຊື່ອໂດຍທາງຄວາມຮັກທີ່ພຣະເຈົ້າໄດ້ມີຕໍ່
ພວກເຮົາ ຄືພຣະເຈົ້າເປັນຄວາມຮັກ ກັບຜູ້ໃດທີ່ຢູ່ໃນຄວາມຮັກກໍຢູ່ໃນພຣະເຈົ້າ
ກັບພຣະເຈົ້າກໍສະຖິດຢູ່ໃນຜູ້ນັ້ນ
4:17 ໃນນີ້ເນາະ ຄວາມຮັກຈັ່ງເຖິງທີ່ສົມບູນແບບໃນພວກເຮົາແລ້ວ ເພື່ອພວກເຮົາ
ຊິມີຄວາມກ້າໃນມື້ພິພາກສາທີ່ຊິມານັ້ນ ຍ້ອນວ່າ ເພິ່ນເປັນຈັ່ງໃດ ພວກເຮົາກໍ
ເປັນຈັ່ງຊັ້ນຢູ່ໃນໂລກນີ້
4:18 ໃນຄວາມຮັກນັ້ນບໍ່ມີຄວາມຢ້ານເລີຍ ຍ້ອນວ່າ ຄວາມຮັກທີ່ສົມບູນແບບນັ້ນ
ໄດ້ຂັບໄລ່ຄວາມຢ້ານອອກໄປແລ້ວ ດ້ວຍວ່າຄວາມຢ້ານເຮັດໃຫ້ເກີດຄວາມທຸກ
ໃນໃຈ ຄືຜູ້ມີຄວາມຢ້ານກໍຍັງບໍ່ທັນເຖິງທີ່ສົມບູນແບບໃນຄວາມຮັກ
4:19 ພວກເຮົາທັງຫລາຍໄດ້ຮັກພຣະເຈົ້າ ກໍຍ້ອນເພິ່ນໄດ້ຮັກພວກເຮົາກ່ອນ
4:20 ຄັນຜູ້ໃດວ່າ *"ຂ້ອຍຮັກພຣະເຈົ້າ"* ແຕ່ຍັງຊັງພີ່ນ້ອງຂອງໂຕ ຜູ້ນັ້ນກໍເປັນຄົນ
ເວົ້າຕົວະ ຍ້ອນວ່າຜູ້ທີ່ບໍ່ຍອມຮັກພີ່ນ້ອງຂອງໂຕຜູ້ທີ່ເຫັນໄດ້ ເຂົາຊິຮັກພຣະເຈົ້າ
ໄດ້ຈັ່ງໃດຜູ້ທີ່ບໍ່ເຄີຍເຫັນ
4:21 ແລ້ວນີ້ກໍເປັນຄຳສັ່ງທີ່ພວກເຮົາມີມາຈາກເພິ່ນ ຄື ຄົນທີ່ຮັກພຣະເຈົ້ານັ້ນ
ຄວນຊິຮັກພີ່ນ້ອງຂອງໂຕນຳ

## 1 ໂຢຮັນ ບົດທີ 5

5:1 ຜູ້ໃດທີ່ເຊື່ອວ່າ ພຣະເຢຊູ ເປັນ ພຣະຄຣິດ ຜູ້ນັ້ນກໍໄດ້ເກີດໃໝ່ຈາກພຣະເຈົ້າ
ກັບວ່າ ຄູ່ຄົນທີ່ຮັກພຣະເຈົ້າຜູ້ທີ່ໃຫ້ການເກີດໃໝ່ນັ້ນ ກໍຮັກພີ່ນ້ອງຜູ້ທີ່ໄດ້ຮັບການ
ເກີດໃໝ່ຈາກເພິ່ນນຳ

5:2 ໂດຍນີ້ເອງ ພວກເຮົາຈັ່ງຮູ້ກັນວ່າ ເຮົາຮັກພີ່ນ້ອງຜູ້ເປັນລູກຂອງພຣະເຈົ້າ ເຫດ
ວ່າພວກເຮົາຮັກພຣະເຈົ້າ ກັບຮັກສາຄຳສັ່ງຂອງເພິ່ນ
5:3 ອັນນີ້ຄືຄວາມຮັກຂອງພວກເຮົາຕໍ່ພຣະເຈົ້າ ທີ່ວ່າພວກເຮົາຮັກສາຄຳສັ່ງຂອງ
ເພິ່ນ ຊຶ່ງການຮັກສາຄຳສັ່ງຂອງເພິ່ນນັ້ນ ກໍບໍ່ໄດ້ເປັນແນວຍາກອີຫຍັງ
5:4 ດ້ວຍວ່າ ຜູ້ໃດທີ່ເກີດຈາກພຣະເຈົ້າ ໄດ້ມີໄຊຕໍ່ໂລກແລ້ວ ກັບນີ້ເນາະເປັນເຄດ-
ລັບແຫ່ງການພິຊິດຊຶ່ງໃຫ້ມີໄຊຕໍ່ໂລກ ຄືຄວາມເຊື່ອຂອງພວກເຮົາ
5:5 ແມ່ນໃຜເປັນຜູ້ມີໄຊຕໍ່ໂລກ ນອກຈາກຜູ້ທີ່ເຊື່ອວາງໃຈວ່າ ພຣະເຢຊູ ເປັນ
ພຣະບຸດ ຂອງພຣະເຈົ້ານັ້ນເອງ
5:6 ນີ້ເນາະ ແມ່ນຜູ້ທີ່ໄດ້ມາດ້ວຍນ້ຳກັບດ້ວຍພຣະໂລຫິດ ຄື ພຣະເຢຊູຄຣິດ ບໍ່
ແມ່ນດ້ວຍນ້ຳຢ່າງດຽວ ແຕ່ດ້ວຍນ້ຳກັບພຣະໂລຫິດ ແລ້ວ ພຣະວິນຍານ ໄດ້ເປັນ
ພະຍານ ຊຶ່ງເປັນ ພຣະວິນຍານ ແຫ່ງຄວາມຈິງ
5:7 ຍ້ອນມີພະຍານຢູ່ສາມພະຍານໃນສະຫວັນ ຄືອົງພຣະເຈົ້າຜູ້ເປັນພໍ່ ອົງ ພຣະ-
ຄຳ ກັບອົງ ພຣະວິນຍານ ແລ້ວພະຍານທັງສາມນີ້ເປັນອັນໜຶ່ງອັນດຽວກັນ
5:8 ແລ້ວກໍມີພະຍານຢູ່ສາມພະຍານໃນໂລກນີ້ ຄື ພຣະວິນຍານ ກັບນ້ຳ ກັບພຣະ-
ໂລຫິດ ກັບພະຍານທັງສາມນີ້ສອດຄ້ອງກັນ
5:9 ຄັນພວກເຮົາຍອມຮັບຄຳພະຍານຫຼັກຖານຂອງຄົນ ພະຍານຫຼັກຖານຂອງ
ພຣະເຈົ້າກໍຍິ່ງໃຫຍ່ກວ່າ ແລ້ວນີ້ຄືພະຍານຫຼັກຖານຂອງພຣະເຈົ້າ ຊຶ່ງເພິ່ນໄດ້
ເປັນພະຍານເຖິງ ພຣະບຸດ ຂອງເພິ່ນ
5:10 ຜູ້ທີ່ເຊື່ອໃນ ພຣະບຸດ ຂອງພຣະເຈົ້າກໍມີຄຳພະຍານຢູ່ໃນໂຕເອງ ຜູ້ທີ່ບໍ່ຍອມ
ເຊື່ອພຣະເຈົ້າກໍຫາວ່າເພິ່ນເປັນຜູ້ເວົ້າຕົວະ ຍ້ອນເຂົາບໍ່ໄດ້ເຊື່ອພະຍານຫຼັກຖານ
ທີ່ພຣະເຈົ້າໃຫ້ເຖິງ ພຣະບຸດ ຂອງເພິ່ນ
5:11 ກັບພະຍານຫຼັກຖານນັ້ນຄືເປັນວ່າ ພຣະເຈົ້າໄດ້ໂຜດປະທານຊີວິດອັນຕະ-
ຫລອດໄປເປັນນິດໃຫ້ພວກເຮົາທັງຫລາຍ ຊຶ່ງຊີວິດອັນຕະຫລອດໄປເປັນນິດນີ້ ມີ
ຢູ່ໃນ ພຣະບຸດ ຂອງເພິ່ນ
5:12 ຜູ້ທີ່ມີ ພຣະບຸດ ໄດ້ມີຊີວິດ ແຕ່ຜູ້ທີ່ບໍ່ມີ ພຣະບຸດ ຂອງພຣະເຈົ້າກໍບໍ່ມີຊີວິດ

5:13 ຂໍ້ຄວາມແນວໝູ່ນີ້ ຂ້ອຍໄດ້ຂຽນມາຍັງພວກເຈົ້າ ຜູ້ທີ່ເຊື່ອໃນພຣະນາມຂອງ
ພຣະບຸດ ຂອງພຣະເຈົ້າ ເພື່ອພວກເຈົ້າຊິຮູ້ວ່າມີຊີວິດອັນຕະຫລອດໄປເປັນນິດ
ແລ້ວເພື່ອພວກເຈົ້າຊິດຳລົງໃນຄວາມເຊື່ອຕໍ່ໄປ ຊຶ່ງມີຢູ່ໃນພຣະນາມຂອງ ພຣະ-
ບຸດ ຂອງພຣະເຈົ້າ
5:14 ອັນນີ້ຄືຄວາມໝັ້ນໃຈທີ່ພວກເຮົາມີຕໍ່ເພິ່ນ ຄືຄັ່ນເຮົາຂໍແນວໜຶ່ງແນວໃດຕາມ
ພຣະປະສົງຂອງເພິ່ນ ເພິ່ນກໍຊິຟັງເຮົາ
5:15 ກັບຄັ່ນພວກເຮົາຮູ້ວ່າເພິ່ນໄດ້ຮັບຟັງເຮົາ ແນວໃດທີ່ເຮົາຂໍນັ້ນ ເຮົາຮູ້ໄດ້ວ່າ
ເຮົາຊິຮັບຕາມທີ່ເຮົາຂໍນຳເພິ່ນ
5:16 ຄັ່ນຜູ້ໃດເຫັນພີ່ນ້ອງຂອງໂຕເຮັດບາບແນວໃດແນວໜຶ່ງ ຊຶ່ງເປັນບາບແນວທີ່
ບໍ່ເຖິງແກ່ຕາຍ ເຂົາຊິຂໍກັບພຣະເຈົ້າ ແລ້ວເພິ່ນຊິໃຫ້ຊີວິດ ເພື່ອຜູ້ຄົນທີ່ເຮັດບາບ
ແນວທີ່ບໍ່ເຖິງແກ່ຕາຍ ແຕ່ວ່າ ມີບາບແນວທີ່ເຖິງແກ່ຕາຍໄດ້ ຊຶ່ງຂ້ອຍບໍ່ແນະນຳ
ໃຫ້ອະທິຖານເພື່ອເລື່ອງນັ້ນ
5:17 ຄູ່ແນວທີ່ບໍ່ເປັນຄວາມຊອບທຳກໍເປັນບາບ ແລ້ວບາບແນວທີ່ບໍ່ເຖິງແກ່ຕາຍກໍ
ມີ
5:18 ພວກເຮົາຮູ້ວ່າ ຜູ້ທີ່ເກີດຈາກພຣະເຈົ້າບໍ່ໄດ້ເຮັດບາບ ໂດຍວ່າຄົນທີ່ເກີດຈາກ
ພຣະເຈົ້າຄອຍຖ້າຮັກສາໂຕເອງ ແລ້ວ ພະຍາມານ ຮ້າຍບໍ່ແຕະຕ້ອງເຂົາເລີຍ
5:19 ພວກເຮົາກໍຮູ້ກັນວ່າ ເປັນຄົນຂອງພຣະເຈົ້າ ແຕ່ໂລກທັງໝົດຕົກຢູ່ໃຕ້ອຳນາດ
ຂອງ ພະຍາມານ ຮ້າຍນັ້ນ
5:20 ແລ້ວພວກເຮົາຮູ້ກັນວ່າ ພຣະບຸດ ຂອງພຣະເຈົ້າມາແລ້ວ ແລ້ວໄດ້ປະທານ
ຄວາມເຂົ້າໃຈໃຫ້ພວກເຮົາ ເພື່ອພວກເຮົາຊິໄດ້ຮູ້ຈັກເພິ່ນຜູ້ທ່ຽງແທ້ ກັບວ່າພວກ
ເຮົາຢູ່ໃນເພິ່ນຜູ້ທ່ຽງແທ້ນັ້ນແລ້ວ ຄືຢູ່ໃນ ພຣະເຢຊູຄຣິດ ພຣະບຸດ ຂອງເພິ່ນ ນີ້
ເນາະ ເປັນພຣະເຈົ້າຜູ້ທ່ຽງແທ້ ກັບເປັນແຫລ່ງຊີວິດອັນຕະຫລອດໄປເປັນນິດ
5:21 ລູກນ້ອຍໆ ເອີຍ ໃຫ້ຮັກສາໂຕເອງໄວ້ຈາກຮູບເຄົາລົບເດີ້ ອາເມນ

# 2 ໂຢຮັນ

[1] ຈາກຂ້ອຍ ຜູ້ເປັນອາວຸໂສເບິ່ງແຍງພີ່ນ້ອງ ຮຽນ ມາຍັງສະຕີທີ່ຊົງເລືອກໄວ້ ກັບລູກໆ ຂອງນາງ ຜູ້ທີ່ຂ້ອຍຮັກແພງໃນຄວາມຈິງ ແລ້ວບໍ່ແມ່ນແຕ່ຂ້ອຍເທົ່ານັ້ນ ແຕ່ໝົດຄູ່ຄົນທີ່ໄດ້ຮູ້ຈັກຄວາມຈິງນຳ

[2] ຍ້ອນເຫັນແກ່ຄວາມຈິງ ທີ່ຢູ່ໃນພວກເຮົາທັງຫລາຍ ກັບໄດ້ດຳລົງຢູ່ນຳພວກເຮົາຕະຫລອດການເປັນນິດ

[3] ຂໍພຣະກະລຸນາທິຄຸນ ຄວາມເມດຕາ ກັບສັນຕິພາບຈາກພຣະເຈົ້າຜູ້ເປັນພໍ່ ກັບຈາກ ພຣະເຢຊູຄຣິດ ຜູ້ເປັນ ພຣະບຸດ ຂອງພຣະເຈົ້າ ສະຖິດຢູ່ກັບພວກເຈົ້າ ໂດຍໃນຄວາມຈິງກັບໃນຄວາມຮັກ

[4] ຂ້ອຍຊື່ນຊົມຍິນດີເປັນຢ່າງຍິ່ງທີ່ໄດ້ເຫັນລູກໆ ຂອງເຈົ້າດຳເນີນໃນຄວາມຈິງຕາມທີ່ພວກເຮົາໄດ້ຮັບຄຳສັ່ງຈາກພຣະເຈົ້າຜູ້ເປັນພໍ່

[5] ແລ້ວສະຕີເອີຍ ບັດນີ້ຂ້ອຍຂໍວິງວອນເຈົ້າ ບໍ່ແມ່ນວ່າຂ້ອຍຂຽນຄຳສັ່ງໃໝ່ໃຫ້ເຈົ້າແຕ່ເປັນຄຳສັ່ງຕົ້ນສະບັບ ທີ່ພວກເຮົາໄດ້ມີມາແລ້ວຕັ້ງແຕ່ທຳອິດ ນັ້ນກໍຄື ໃຫ້ພວກເຮົາທັງຫລາຍຮັກຊຶ່ງກັນແລະກັນ

[6] ກັບຄວາມຮັກນັ້ນກໍເປັນແນວນີ້ ຄືພວກເຮົາທັງຫລາຍຄວນຊິດຳເນີນຕາມຄຳສັ່ງຂອງເພິ່ນ ນີ້ກໍເປັນຄຳສັ່ງນັ້ນຊຶ່ງພວກເຈົ້າໄດ້ຍິນມາຕັ້ງແຕ່ທຳອິດ ທີ່ພວກເຈົ້າຄວນຊິດຳເນີນຕາມ

[7] ຍ້ອນວ່າ ມີຄົນລໍ້ລວງຫລາຍຄົນໄດ້ອອກໄປໃນໂລກແລ້ວ ພວກນີ້ບໍ່ຍອມຮັບວ່າ ພຣະເຢຊູຄຣິດ ໄດ້ມາໃນສະພາບເປັນຄົນມີເນື້ອໜັງ ພວກນັ້ນເນາະ ເປັນຜູ້ລໍ້-ລວງ ກັບເປັນຝ່າຍປະຕິປັກຕໍ່ ພຣະຄຣິດ

[8] ໃຫ້ພວກເຈົ້າລະວັງໂຕໃຫ້ດີເດີ້ ເພື່ອບຳເໜັດຂອງແນວທີ່ຊິໄດ້ນັ້ນ ຊິບໍ່ໄດ້ສູນ-ເສຍໄປ ແຕ່ຊິໄດ້ຮັບຢ່າງເຕັມທີ່ ແນວທີ່ພວກເຮົາໄດ້ມາແລ້ວນັ້ນ

[9] ຜູ້ໃດລະເມີດໄປ ແລ້ວບໍ່ໄດ້ດຳເນີນຢູ່ໃນຫລັກການສອນຂອງ ພຣະຄຣິດ ຜູ້ນັ້ນກໍບໍ່ມີພຣະເຈົ້າ ແຕ່ຜູ້ໃດທີ່ດຳເນີນຢູ່ໃນຫລັກການສອນຂອງ ພຣະຄຣິດ ຜູ້ນັ້ນກໍມີທັງພຣະເຈົ້າຜູ້ເປັນພໍ່ ພ້ອມທັງ ພຣະບຸດ ນຳ

10 ຄັນມີຜູ້ໃດມາຫາພວກເຈົ້າ ແຕ່ບໍ່ໄດ້ມາດ້ວຍຫລັກການສອນນີ້ ຢ່າຕ້ອນຮັບເຂົາ
ໄວ້ໃນເຮືອນເດີ້ ກັບຢ່າທັກທາຍອວຍພອນເຂົາເລີຍເດີ້
11 ຍ້ອນວ່າ ຜູ້ທີ່ທັກທາຍອວຍພອນເຂົາ ໄດ້ເຂົ້າມີສ່ວນຮ່ວມໃນການເຮັດອັນຊົ່ວ
ຂອງເຂົານັ້ນ
12 ຂ້ອຍກໍຍັງມີຂໍ້ຄວາມອີກຫລາຍຂໍ້ທີ່ຊິຂຽນມາຍັງເຈົ້າ ແຕ່ບໍ່ຢາກຂຽນດ້ວຍເຈ້ຍ
ກັບນໍ້າໝຶກ  ຄື ຂ້ອຍຫວັງໃຈວ່າຊິມາຫາເຈົ້າຊຸມກັນຕໍ່ໜ້າ ເພື່ອພວກເຮົາຊິໄດ້ມີ
ຄວາມປີຕິຍິນດີນໍາກັນຢ່າງເຕັມປ່ຽມ
13 ພວກພີ່ນ້ອງທີ່ເປັນລູກໆ ຂອງສະຕີຜູ້ເປັນພີ່ນ້ອງຂອງເຈົ້າ ທີ່ຊົງເລືອກໄວ້ ຝາກ
ຄວາມຄຶດຮອດມາຍັງເຈົ້າ ອາເມນ

# 3 ໂຢຮັນ

1 ຈາກຂ້ອຍ ຜູ້ເປັນຜູ້ເບິ່ງແຍງ ຮຽນ ມາຍັງ ນາຍ ຄາໂຢ  ຜູ້ເປັນທີ່ຮັກຂອງຂ້ອຍ
ໃນຄວາມຈິງ
2 ຜູ້ທີ່ຮັກໃນພຣະເຈົ້າເອີຍ ຂ້ອຍຂໍຮ້ອງໃຫ້ເຈົ້າຈະເລີນໃນຄູ່ຢ່າງ ກັບມີສຸກຂະ-
ພາບດີ ຄືກັນກັບທີ່ຈິດວິນຍານຂອງເຈົ້າໄດ້ຈະເລີນຢູ່
3 ຄື ຂ້ອຍຊື່ນຊົມຍິນດີຫລາຍ ບັດພວກພີ່ນ້ອງໄດ້ມາເປັນພະຍານ ບອກຂ້ອຍເຖິງ
ຄວາມຈິງທີ່ຢູ່ໃນໂຕເຈົ້າ ຄືກັນກັບທີ່ເຈົ້າດໍາເນີນຊີວິດຕາມຄວາມຈິງນັ້ນ
4 ຄື ຂ້ອຍບໍ່ມີຄວາມຍິນດີຫລາຍກວ່ານີ້  ທີ່ໄດ້ຍິນວ່າ ລູກທັງຫລາຍຂອງຂ້ອຍດໍາ-
ເນີນຢູ່ໃນຄວາມຈິງ
5 ເຈົ້າຜູ້ທີ່ຮັກເອີຍ ອີຫຍັງແໜ່ທີ່ເຈົ້າເຮັດເພື່ອພີ່ນ້ອງ ກັບເພື່ອຄົນແປກຖິ່ນນໍາ ຈັ່ງ
ຂໍໃຫ້ເຈົ້າເຮັດດ້ວຍຄວາມຈິ່ງຮັກພັກດີ
6 ຊຶ່ງເຂົາພວກນັ້ນໄດ້ເປັນພະຍານ ຕໍ່ໜ້າກຸ່ມຜູ້ເຊື່ອຢູ່ທາງນີ້ ເຖິງຄວາມຮັກຂອງ
ເຈົ້າຕໍ່ເຂົາ ແລ້ວຄັນເຈົ້າຊ່ອຍຈັດສົ່ງພວກເຂົາໃນການເດີນທາງຕໍ່ອີກ ຕາມແບບ
ຢ່າງອັນສົມຄວນຕໍ່ພຣະເຈົ້າ ມັນກໍຊິເປັນການດີໃຫ້ເຈົ້າ
7 ຍ້ອນວ່າ ເຂົາພວກນັ້ນໄດ້ອອກໄປ ເພື່ອພຣະນາມຂອງເພິ່ນ ແຕ່ບໍ່ໄດ້ຮັບການ
ຊ່ອຍເຫລືອຈັກແນວຈາກພວກຕ່າງຊາດເລີຍ

8 ຈັ່ງຊັ້ນ ເຮົາຄວນຕ້ອນຮັບເຂົາ ເພື່ອພວກເຮົາຊິໄດ້ເປັນຜູ້ຮ່ວມງານໃນເລື່ອງ
ຄວາມຈິງ
9 ແລ້ວຂ້ອຍໄດ້ຂຽນເຖິງກຸ່ມຜູ້ເຊື່ອທາງພູ່ນ ແຕ່ ນາຍ ດີໂອເທເຟ ຜູ້ຢາກເປັນ
ໃຫຍ່ເປັນໂຕໃນໝູ່ພວກເຂົາ ບໍ່ຍອມຮັບພວກເຮົາໄວ້
10 ຈັ່ງຊັ້ນ ຄັ່ນຂ້ອຍມາ ຂ້ອຍຊິຈຳການເຮັດຕ່າງໆ ຂອງ ດີໂອເທເຟ ໄວ້ ຄືແນວທີ່
ເຂົາໄດ້ຕໍ່ຕ້ານພວກເຮົາດ້ວຍຄຳກ່າວຮ້າຍທາສີ ກັບເຂົາຍັງບໍ່ພໍໃຈສໍ່ານັ້ນ ເຂົາກໍ
ຍັງບໍ່ຍອມຮັບພີ່ນ້ອງຂອງພວກເຮົາ ແລ້ວກໍຍັງກີດກັນຫ້າມໄວ້ ບໍ່ໃຫ້ຄົນທີ່ຢາກຊິ
ຮັບພວກເຂົາ ເຖິງໄລ່ອອກຈາກກຸ່ມຜູ້ເຊື່ອເລີຍຊໍ້າ
11 ເຈົ້າຜູ້ຮັກໃນພຣະເຈົ້າເອີຍ ຢ່າຕາມແບບແນວຊົ່ວເດີ້ ແຕ່ໃຫ້ເອົາແບບແນວທີ່ດີ
ຜູ້ທີ່ເຮັດດີກໍມາຈາກພຣະເຈົ້າ ຜູ້ທີ່ເຮັດຊົ່ວກໍບໍ່ເຄີຍເຫັນພຣະເຈົ້າ
12 ສ່ວນ ນາຍ ເດເມທີໂອ ນັ້ນ ໄດ້ຮັບຄຳພະຍານດີຈາກໝົດຄູ່ຄົນ ກັບຄວາມຈິງກໍ
ເປັນພະຍານຢູ່ໃນໂຕຂອງ ລາວ ເອງຢູ່ແລ້ວ ແລ້ວພວກເຈົ້າຮູ້ກັນວ່າ ຄຳພະຍານ
ຂອງພວກເຮົາເປັນຄວາມຈິງນຳ
13 ຂ້ອຍມີຫລາຍເລື່ອງທີ່ຊິຂຽນ ແຕ່ບໍ່ຢາກຂຽນມາຍັງເຈົ້າດ້ວຍນໍ້າໝຶກກັບປາກ
ກາ
14 ແຕ່ຂ້ອຍຫວັງວ່າຊິໄດ້ຮັບພວກເຈົ້າໃນໄວໆ ນີ້ ກັບຊິໄດ້ຊຸມກັນໜ້າຕໍ່ໜ້າ ຂໍ
ສັນຕິພາບດຳລົງຢູ່ນຳພວກເຈົ້າ ໝູ່ພວກຂອງເຮົາຢູ່ທາງນີ້ກໍຝາກຄວາມຄຶດຮອດ
ມາຍັງເຈົ້າ ຊ່ອຍຝາກຄວາມຄຶດຮອດມາຍັງໝູ່ພວກແໜ່ ຕາມຊື່ແຕ່ລະຄົນເດີ້

# ຢູດາ

1 ຈາກ ຢູດາ ຜູ້ເປັນຂ້າຮັບໃຊ້ຂອງ ພຣະເຢຊູຄຣິດ ກັບເປັນນ້ອງຊາຍຂອງ ຢາ-
ໂກໂບ ຮຽນ ຄົນທັງຫລາຍທີ່ພຣະເຈົ້າຜູ້ເປັນພໍ່ໄດ້ເອີ້ນໄດ້ເຊີນມາ ໄດ້ຊຳລະລາງ
ຕັ້ງໃຫ້ເປັນຜູ້ບໍລິສຸດ ຊຶ່ງໄດ້ຄຸ້ມຄອງຮັກສາໂດຍໃນ ພຣະເຢຊູຄຣິດ
2 ຂໍຄວາມເມດຕາ ສັນຕິພາບ ກັບຄວາມຮັກເພີ່ມທະວີຫລາຍຂຶ້ນຕໍ່ພວກເຈົ້າເຖີດ
3 ພີ່ນ້ອງທີ່ຮັກທັງຫລາຍເອີຍ ຕອນທີ່ຂ້ອຍພະຍາຍາມຂຽນມາຍັງພວກເຈົ້າໃນ
ເລື່ອງຄວາມລອດພົ້ນຂອງພວກເຮົານີ້ ຂ້ອຍຈັ່ງເຫັນວ່າຈຳເປັນທີ່ຊິຕ້ອງຂຽນມາ

ຂໍຮ້ອງວ່າ ພວກເຈົ້າຄວນໃສ່ໃຈໃນການຕໍ່ສູ້ເພື່ອຄວາມເຊື່ອ ຊຶ່ງໄດ້ຮັບການມອບ
ໄວ້ໃຫ້ກັບພວກຄົນຂອງພຣະເຈົ້າທັງຫລາຍມາແລ້ວ
4 ຍ້ອນວ່າ ມີຜູ້ລາງຄົນໄດ້ແອບລີ້ເຂົ້າມາຢ່າງບໍ່ຮູ້ເມື່ອໂຕ ຊຶ່ງແມ່ນພວກນີ້ທີ່ມັນ
ຖືກໝາຍໄວ້ແຕ່ດົນນານວ່າ ຊິຕ້ອງຖືກການພິພາກສາລົງໂທດຈັ່ງຊີ້ ເປັນຄົນອະ-
ທຳ ທີ່ໄດ້ບິດເບືອນພຣະຄຸນຂອງພຣະເຈົ້າຂອງເຮົາ ໃຫ້ກາຍເປັນການຊົ່ວຊ້າລາ-
ມົກ ກັບປະຕິເສດອົງພຣະຜູ້ເປັນເຈົ້າ ຜູ້ເປັນພຣະເຈົ້າແຕ່ຜູ້ດຽວ ກັບປະຕິເສດອົງ
ພຣະເຢຊູຄຣິດເຈົ້າຂອງເຮົານຳ
5 ຂ້ອຍຢາກເຕືອນຄວາມຈຳໃຫ້ພວກເຈົ້າ ເຖິງແມ່ນວ່າພວກເຈົ້າເຄີຍຮູ້ເລື່ອງນີ້ມາ
ແລ້ວ ຄື ອົງພຣະຜູ້ເປັນເຈົ້າໄດ້ໂຜດຊ່ອຍຄົນຂອງເພິ່ນໃຫ້ລອດຈາກດິນແດນ
ເອຢິບ ໃນສະໄໝກ່ອນນັ້ນ ຢູ່ມາເພິ່ນກໍໄດ້ທຳລາຍຄົນພວກນັ້ນທີ່ບໍ່ຍອມເຊື່ອ
6 ແລ້ວຝ່າຍໝູ່ເທວະທູດນັ້ນ ທີ່ບໍ່ໄດ້ຮັກສາສະພາບບໍລິສຸດອັນຕົ້ນສະບັບຂອງເຂົາ
ແຕ່ໄດ້ປະຖິ້ມຖານະເດີມຂອງເຂົານັ້ນ ເພິ່ນໄດ້ຈອງຈຳພວກເຂົາໄວ້ດ້ວຍໂສ້ຕະ-
ຫລອດອັນຕະຫລອດໄປເປັນນິດ ຂັງໄວ້ໃນໝ້ອງມືດຈົນກວ່າຊິຮອດການພິພາກ-
ສາໃນມື້ສຳຄັນອັນຍິ່ງໃຫຍ່ນັ້ນ
7 ແລ້ວແມ່ນແຕ່ເມືອງ ໂສໂດມ ເມືອງ ໂກໂມຣາ ກັບເມືອງຕ່າງໆ ທີ່ຢູ່ລ້ອມຮອບ
ທີ່ໄດ້ລ່ວງໄປໃນການມົວເມົາຮ່ວມເພດໃນການະລາຄະຕັນຫາ ພຣະເຈົ້າໄດ້ຕັ້ງ
ໄວ້ເປັນໂຕຢ່າງຂອງການທີ່ຊິຕ້ອງໄດ້ຮັບໂທດອັນຮ້າຍແຮງໃນໄຟອັນຕະ-
ຫລອດໄປເປັນນິດ
8 ໃນທຳນອງດຽວກັນ ພວກຄົນເພີ້ຝັນແຕ່ເລື່ອງສົກກະປົກນັ້ນ ຄົນແນວນີ້ເປັນ
ມົນທິນທັງໂຕ ດູໝິ່ນຜູ້ມີອຳນາດ ກັບເວົ້າໃສ່ຮ້າຍຕໍ່ຜູ້ມີບັນດາສັກ
9 ແມ່ນແຕ່ ມີກາເອນ ຜູ້ເປັນເທວະທູດສູງສຸດນັ້ນ ຕອນ ລາວ ຂັດແຍ້ງກັນກັບ ພະ-
ຍາມານ ເລື່ອງສົບຂອງ ໂມເຊ ລາວ ເອງກໍຍັງບໍ່ກ້າທີ່ຊິວ່າກ່າວ ພະຍາມານ ເລີຍ
ແຕ່ພຽງບອກມັນວ່າ *“ໃຫ້ອົງພຣະຜູ້ເປັນເຈົ້າວ່າກ່າວເຈົ້າເຖີດ”*

10 ແຕ່ວ່າຄົນພວກນີ້ໄດ້ເວົ້າໃສ່ຮ້າຍເຖິງແນວໃດໆ ທີ່ເຂົາບໍ່ຮູ້ ເວົ້າຢ່າງຮູ້ເທົ່າບໍ່
ເຖິງການ ຈັ່ງເວົ້າຕາມຄວາມໂງ່ໂດຍສັນຊາດຍານຂອງໂຕເອງ ຄືສັດເດຍລະ-
ສານທີ່ບໍ່ມີຄວາມຄຶດ ເຂົາຈັ່ງເຮັດໃຫ້ໂຕເອງເສື່ອມຊາມລົງໄປດ້ວຍການທີ່ເຂົາ
ເອງໄດ້ເວົ້ານັ້ນ
11 ຈິບຫາຍແລ້ວ ພວກນີ້ ຍ້ອນເຂົາໄປນຳທາງຂອງທ້າວ ກາອິນ ນັ້ນເອງ ກັບໄດ້
ຮວມກັນແຕ່ແລ່ນໄປຕາມທາງຜິດພາດຂອງ ບາລາອັມ ຍ້ອນຂີ້ໂລບເຫັນແກ່ໄດ້
ແລ້ວຈັ່ງພິນາດໄປໃນທາງກະບົດຂອງ ໂກຣາ
12 ຄົນພວກນີ້ເປັນແປ້ວເປັນຈຸດດ່າງໃນງານກິນລ້ຽງສາມັກຄີຂອງພວກເຈົ້າ ບັດ
ຍາມເຂົາຮ່ວມກັນກັບພວກເຈົ້ານັ້ນ ກໍບໍ່ມີການເກງໃຈເລີຍ ສົນໃຈແຕ່ໂຕເອງ
ພວກນີ້ຄືເມກບໍ່ມີຝົນ ຖືກພັດໄປພັດມາ ຕາມກະແສລົມ ຄືກົກໄມ້ທີ່ບໍ່ອອກໝາກໃນ
ຍາມເກັບກ່ຽວ ຕາຍແລ້ວຕາຍອີກ ຖືກຫລົກອອກມາທັງຮາກ
13 ຄືຄື້ນທະເລທີ່ຊັດໄປຊັດມາຢ່າງຮຸນແຮງ ເກີດເປັນຟອງຂຶ້ນມາໃນການລະອາຍ
ຂອງເຂົາເອງ ເຂົາຄືດາວທີ່ຫລົງທາງ ຊຶ່ງມີແຕ່ແດນມືດຈອງໄວ້ສຳລັບເຂົາຢູ່ຕະ-
ຫລອດການເລີຍ
14 ແລ້ວ ສ່ວນທ້າວ ເອໂນກ ໃນສະໄໝກ່ອນ ຍາມລູກຫລານຄົນທີ່ເຈັດນັບແຕ່ພໍ່
ອາດັມ ມາ ກໍໄດ້ພະຍາກອນເຖິງຄົນພວກນີ້ນຳ ວ່າ *"ນີ້ແຫລະ ອົງພຣະຜູ້ເປັນເຈົ້າ
ຊິໄດ້ລົງມາພ້ອມຄົນບໍລິສຸດຂອງເພິ່ນເປັນສິບໆ ໝື່ນ*
15 ມາເພື່ອພິພາກສາລົງໂທດຄົນທັງປວງ ໃຫ້ພວກຄົນຊົ່ວທີ່ບໍ່ເຄົາລົບພຣະເຈົ້າ
ຊຶ່ງຢູ່ໃນລະຫວ່າງພວກພີ່ນ້ອງ ໃຫ້ເຂົາຮູ້ເມື່ອໂຕໃນແນວຊົ່ວທີ່ເຂົາເຮັດໃນທາງ
ບໍ່ເປັນທຳຂອງເຂົາ ພ້ອມທັງການຫຍາບຄາຍທັງໝົດທີ່ພວກຄົນບາບຊົ່ວໄດ້ເວົ້າ
ໃນການລົບຫລູ່ພຣະເຈົ້າ"
16 ຄົນພວກນີ້ເປັນແຕ່ຄົນຈົ່ມ ຄົນດ່າ ດຳເນີນຕາມທາງຕັນຫາແຫ່ງເພດຂອງໂຕ
ເອງ ປາກຂອງເຂົາມີແຕ່ອວດອ້າງໃຫຍ່ໂຕໃນແນວຕ່າງໆ ປະຈົບປະແຈງເວົ້າດີ
ໃຫ້ຜູ້ອື່ນເພື່ອຫວັງຜົນປະໂຫຍດໂຕເອງ
17 ແຕ່ວ່າ ພີ່ນ້ອງທີ່ຮັກເອີຍ ໃຫ້ຈຳພິຈາລະນາຖ້ອຍຄຳທີ່ພວກທູດພິເສດຂອງອົງ
ພຣະເຢຊູຄຣິດເຈົ້າໄດ້ເວົ້າມາກ່ອນນັ້ນເດີ້

18 ທີ່ວ່າ ພວກເຂົາໄດ້ບອກພວກເຈົ້າວ່າ ໃນຍຸກສຸດທ້າຍທີ່ຊິມາ ຊິມີຄົນເຍາະເຍີ້ຍ
ເກີດຂຶ້ນ ເຂົາເປັນຄົນທີ່ດຳເນີນຕາມຕັນຫາອັນຊົ່ວຂອງໂຕເອງ
19 ຄົນພວກນີ້ຄືປະເພດທີ່ມັກເຮັດຕາມໂລກີລັກສະນະ ກໍ່ການແຕກແຍກກັນ
ຍ້ອນບໍ່ມີ ພຣະວິນຍານ ຢູ່ໃນໂຕເຂົາເລີຍ
20 ແຕ່ພີ່ນ້ອງທີ່ຮັກເອີຍ ພວກເຈົ້າຄວນຊິເສີມສ້າງໂຕເອງຂຶ້ນໃນຄວາມເຊື່ອອັນ
ບໍລິສຸດຍິ່ງຂອງພວກເຈົ້າ ຈັ່ງອະທິຖານເວົ້ານຳພຣະເຈົ້າດ້ວຍອາໄສ ພຣະວິນ-
ຍານ
21 ແຕ່ຝ່າຍພວກເຈົ້າ ໃຫ້ຮັກສາໂຕເອງໄວ້ໃນຄວາມຮັກຂອງພຣະເຈົ້າເດີ້ ໃນຂະ-
ນະທີ່ຖ້າຮັບຄວາມເມດຕາຂອງອົງພຣະເຢຊູຄຣິດເຈົ້າຂອງເຮົາ ເຖິງຊີວິດອັນ-
ຕະຫລອດໄປເປັນນິດ
22 ແລ້ວໃຫ້ສະແດງຄວາມເມດຕາໃຫ້ຜູ້ລາງຄົນເດີ້ ໂດຍອາໄສການພິຈາລະນາ
ແຕ່ລະຄົນ
23 ແລະຊ່ອຍໃຫ້ຄົນອື່ນລອດພົ້ນໂດຍຄວາມເຄົາລົບ ຄືລາກໂຕເຂົາອອກຈາກໄຟ
ຈັ່ງຊັງແມ່ນແຕ່ເສື້ອຜ້າທີ່ເປື້ອນເປັນມົນທິນດ້ວຍເນື້ອໜັງຂອງເຂົາ
24 ບັດນີ້ ແດ່ເພິ່ນຜູ້ສາມາດຄຸ້ມຄອງຮັກສາພວກເຈົ້າໄວ້ ບໍ່ໃຫ້ສະດຸດລົ້ມລົງເລີຍ
ແລ້ວສາມາດມອບພວກເຈົ້າໄວ້ຢ່າງດີພ້ອມ ດ້ວຍຄວາມປິຕິຍິນດີຢ່າງເຫລືອລົ້ນ
ຕໍ່ໜ້າພຣະເຈົ້າຜູ້ປະກອບດ້ວຍສະຫງ່າລາສີ
25 ຂໍສະຫງ່າລາສີ ພຣະບາລະມີ ການຄອບຄອງ ກັບ ລິດທານຸພາບ ມີແດ່ພຣະ-
ເຈົ້າ ພຣະຜູ້ໂຜດຂອງພວກເຮົາ ຜູ້ປະກອບດ້ວຍພຣະປັນຍາອັນກະຈັກກະຈາຍ
ແຕ່ຜູ້ດຽວ ໃນປະຈຸບັນ ພ້ອມທັງຕະຫລອດການເປັນນິດ ອາເມນ

# ພຣະນິມິດ

## ພຣະນິມິດ ບົດທີ 1

1:1 ການເປີດເຜີຍເລື່ອງຂອງ ພຣະເຢຊູຄຣິດ ຊຶ່ງພຣະເຈົ້າໄດ້ມອບໃຫ້ເພິ່ນ ເພື່ອ
ຊີ້ແຈງໃຫ້ພວກຜູ້ຮັບໃຊ້ທັງຫລາຍຂອງເພິ່ນ ໃຫ້ຮູ້ເຖິງເຫດການທີ່ຊິຕ້ອງເປັນໄປ
ໃນຍາມບໍ່ດົນນານ ແລ້ວເພິ່ນໄດ້ໃຊ້ເທວະທູດຂອງເພິ່ນໃຫ້ໄປບົ່ງບອກ ໂຢຮັນ ຜູ້
ຮັບໃຊ້ຂອງເພິ່ນ

1:2 ຊຶ່ງ ໂຢຮັນ ເປັນພະຍານຫຼັກຖານເຖິງ ພຣະຄຳ ຂອງພຣະເຈົ້າ ກັບເຖິງຄຳພະ-
ຍານຂອງ ພຣະເຢຊູຄຣິດ ເຖິງເຫດການໝົດຄູ່ແນວທີ່ ລາວ ໄດ້ເຫັນມານັ້ນ
1:3 ແລ້ວຜູ້ທີ່ອ່ານຄຳພະຍາກອນແນວໝູ່ນີ້ຊິໄດ້ພົບເປັນສຸກ ຮ່ວມກັບຜູ້ຄົນທີ່ຮັບ
ຟັງກໍໄດ້ພົບເປັນສຸກນຳ ກັບຮັກສາຂໍ້ຄວາມທີ່ຂຽນໄວ້ໃນນີ້ ຍ້ອນວ່າຍາມນັ້ນໃກ້ຊິ
ມາຮອດແລ້ວ
1:4 ຈາກ ໂຢຮັນ ຮຽນມາຍັງກຸ່ມຜູ້ເຊື່ອທັງເຈັດກຸ່ມ ຊຶ່ງຢູ່ແຖວ ເອເຊຍ ຂໍໃຫ້ພຣະ-
ກະລຸນາທິຄຸນ ພ້ອມທັງຄວາມສະຫງົບສຸກຈາກເພິ່ນ ຜູ້ດຳລົງຢູ່ໃນສະໄໝນີ້ ກັບ
ໃນສະໄໝກ່ອນ ກັບໃນອະນາຄົດທາງໜ້າທີ່ຊິມາເຖິງ ກັບຈາກວິນຍານທັງເຈັດ
ອົງຊຶ່ງຢູ່ຕໍ່ໜ້າພຣະທີ່ນັ່ງຂອງເພິ່ນ ດຳລົງຢູ່ນຳພວກເຈົ້າເຖີດ
1:5 ກັບຈາກ ພຣະເຢຊູຄຣິດ ຜູ້ເພິ່ນເປັນພະຍານສັດຊື່ພັກດີ ກັບເປັນຜູ້ທຳອິດທີ່
ເປັນຂຶ້ນມາຈາກຕາຍ ກັບເປັນປະລະບຽງ ຜູ້ຄອບຄອງເໜືອກະສັດທັງມວນໃນ
ໂລກ ແດ່ເພິ່ນຜູ້ທີ່ຮັກພວກເຮົາ ກັບໄດ້ຊຳລະລາງບາບຂອງພວກເຮົາທັງຫລາຍ
ໃຫ້ໝົດໄປໂດຍພຣະໂລຫິດຂອງເພິ່ນ
1:6 ກັບໄດ້ຕັ້ງພວກເຮົາທັງຫລາຍໄວ້ໃຫ້ເປັນລາຊະອານາຈັກປະໂລຫິດແດ່ພຣະ-
ເຈົ້າຜູ້ເປັນພໍ່ຂອງເພິ່ນ ຂໍສະຫງ່າລາສີກັບລິດທານຸພາບອັນສູງສຸດມີແດ່ເພິ່ນສືບໆ
ໄປຕະຫລອດການເປັນນິດ ອາເມນ
1:7 ນີ້ແຫລະ ເພິ່ນກໍຊິລົງມາໃນເມກ ແລ້ວດວງຕາທັງໝົດຊິໄດ້ເຫັນເພິ່ນ ແລ້ວຄົນ
ແນວໝູ່ນັ້ນທີ່ໄດ້ແທງເພິ່ນກໍຊິໄດ້ເຫັນນຳ ແລ້ວມະນຸດຄູ່ຊາດຢູ່ທົ່ວໂລກຊິຮ້ອງໄຫ້
ຍ້ອນເພິ່ນ ຈັ່ງຊັ້ນ ຂໍສາທຸການພຣະເຈົ້າ ອາເມນ
1:8 ອົງພຣະຜູ້ເປັນເຈົ້າຈັ່ງເວົ້າວ່າ "ເຮົານີ້ເປັນ *ອາລະຟາ* ກັບເປັນ *ໂອເມຄາ* ເປັນ
ບັ້ນກົກກັບເປັນບັ້ນປາຍ ເປັນຜູ້ດຳລົງຢູ່ຕະຫລອດການ ຢູ່ໃນອະດີດ ຢູ່ໃນປະຈຸ-
ບັນ ທັງຢູ່ໃນອະນາຄົດທີ່ຊິມານັ້ນ ຊຶ່ງເປັນຜູ້ປະກອບດ້ວຍລິດທານຸພາບສູງສຸດ"
1:9 ແລ້ວຜູ້ຂ້າ ຄື ໂຢຮັນ ນີ້ ເປັນພີ່ນ້ອງຂອງພວກເຈົ້າ ເປັນໝູ່ຮ່ວມກັນໃນການ
ທຸກຍາກລຳບາກ ກັບຮ່ວມກັນໃນລາຊະອານາຈັກຂອງເພິ່ນ ກັບໄດ້ຮ່ວມກັນໃນ
ຄວາມອົດທົນເພື່ອ ພຣະເຢຊູຄຣິດ ພ້ອມນຳພວກເຈົ້າ ແລ້ວຜູ້ຂ້າໄດ້ຖືກສົ່ງມາຢູ່

ເກາະໜຶ່ງທີ່ເອີ້ນວ່າ ເກາະ ປັດໂມ ຍ້ອນເຫັນແກ່ ພຣະຄຳ ຂອງພຣະເຈົ້າ ກັບເຫັນ
ແກ່ຄຳພະຍານຂອງ ພຣະເຢຊູຄຣິດ
1:10 ແລ້ວຜູ້ຂ້າໄດ້ຢູ່ຝ່າຍ ພຣະວິນຍານ ເປັນມື້ຂອງອົງພຣະຜູ້ເປັນເຈົ້າ ຜູ້ຂ້າຈັ່ງ
ໄດ້ຍິນສຽງດັ່ງຂອງຜູ້ມີອຳນາດຢູ່ທາງຫລັງຜູ້ຂ້າ ເປັນຄືສຽງແກ
1:11 ໄດ້ເວົ້າວ່າ "ເຮົາ ເປັນ *ອາລະຟາ* ກັບເປັນ *ໂອເມຄາ* ເປັນບັ້ນຕົ້ນກັບເປັນບັ້ນ-
ປາຍ ແລ້ວແນວທີ່ເຈົ້າໄດ້ເຫັນນີ້ກໍໃຫ້ຈົດໄວ້ໃນໜັງສື ຝາກໄປໃຫ້ກຸ່ມຜູ້ເຊື່ອທັງ
ເຈັດກຸ່ມ ຢູ່ໃນແຖວ *ເອເຊຍ* ຄືຢູ່ເມືອງ *ເອເຟໂຊ* ເມືອງ *ຊະມີນາ* ເມືອງ *ເປຄາໂມ*
ເມືອງ *ທົວເຕຣາ* ເມືອງ *ຊາເດ* ເມືອງ *ຟີລາເດັນເຟຍ* ກັບເມືອງ *ລາວດີເກອາ*"
1:12 ແລ້ວຜູ້ຂ້າຈັ່ງຫລຽວມາທາງສຽງທີ່ເວົ້າກັບຜູ້ຂ້ານັ້ນ ບັດຫລຽວແລ້ວຜູ້ຂ້າກໍ
ເຫັນໂຄມໄຟທອງຄຳຕັ້ງຢູ່ເຈັດອັນ
1:13 ແລ້ວຢູ່ໃນລະຫວ່າງກາງໂຄມໄຟທັງເຈັດນັ້ນ ມີຜູ້ໜຶ່ງມີລັກສະນະຄືກັນກັບບຸດ
ມະນຸດ ໄດ້ນຸ່ງເສື້ອຄຸມຍາວຮອດຕີນ ກັບມີຜ້າທອງຄຳພັນໄວ້ທີ່ໜ້າເອິກ
1:14 ຫົວກັບຜົມຂອງເພິ່ນກໍຂາວຈົ່ວະພໍຄືຂົນແກະ ຄືຂາວຄືຫິມະ ແລ້ວຕາຂອງ
ເພິ່ນເປັນແສງຄືແປວໄຟ
1:15 ຕີນຂອງເພິ່ນຄືທອງເຫລືອງອອກເງົາ ພໍຄືພວມຖືກຫລອມໄຟໃນເຕົາໃຫຍ່
ສຽງເວົ້າຂອງເພິ່ນຄືສຽງນໍ້າຫລາຍໆທີ່ໄຫລແຮງ
1:16 ແລ້ວເພິ່ນຖືດວງດາວເຈັດດວງໄວ້ໃນມືຂວາຂອງເພິ່ນ ແລ້ວກໍມີດາບສອງຄົມ
ຊຶ່ງຄົມໆ ອອກມາຈາກປາກຂອງເພິ່ນ ກັບລັກສະນະສີໜ້າຂອງເພິ່ນສະຫວ່າງຄື
ດວງຕະເວັນທີ່ສ່ອງແສງກ້າຢ່າງເຕັມແຮງຂອງມັນ
1:17 ແລ້ວບັດຜູ້ຂ້າໄດ້ເຫັນເພິ່ນ ຜູ້ຂ້າໄດ້ລົ້ມລົງຕໍ່ຕີນຂອງເພິ່ນ ຄືຄົນຕາຍ ແຕ່ເພິ່ນ
ກໍເລີຍວາງມືຂວາແຕະໂຕຜູ້ຂ້າ ແລ້ວກໍເວົ້າກັບຜູ້ຂ້າວ່າ *"ຢ່າສູ່ຢ້ານເດີ້ ເຮົາເປັນ
ບັ້ນຕົ້ນກັບບັ້ນປາຍ*
1:18 ກັບເປັນຜູ້ທີ່ດຳລົງຢູ່ ຊຶ່ງເຮົາເຄີຍຕາຍໄປ ແຕ່ນີ້ແຫລະ ບັດນີ້ເຮົາກໍດຳລົງຢູ່
ຕະຫລອດການເປັນນິດ ອາເມນ ກັບເຮົາຖືລູກກຸນແຈຂອງແດນມໍລະນາ ກັບຂອງ
ຄວາມຕາຍນຳ

1:19 ໃຫ້ຈົດແນວໝູ່ນີ້ໄວ້ເດີ້ ຄືແນວທີ່ເຈົ້າໄດ້ເຫັນມາແລ້ວ ກັບແນວທີ່ພວມເປັນໄປ
ໃນຍາມນີ້ ທັງແນວທີ່ຊິເກີດຂຶ້ນໃນພາຍໜ້າ
1:20 ແລ້ວສ່ວນຄວາມເລິກລັບເລື່ອງຂອງດາວເຈັດດວງ ທີ່ເຈົ້າໄດ້ເຫັນໃນມືຂວາ
ຂອງເຮົານີ້ ກັບເລື່ອງໂຄມໄຟທອງຄຳເຈັດອັນນັ້ນໄດ້ເປັນຈັ່ງຊີ້ ຄື ດາວເຈັດດວງ
ນັ້ນ ເປັນເທວະທູດເໜືອກຸ່ມຜູ້ເຊື່ອເຈັດກຸ່ມ ແລ້ວໂຄມໄຟເຈັດອັນຊຶ່ງເຈົ້າໄດ້ເຫັນ
ຄືກຸ່ມຜູ້ເຊື່ອເຈັດກຸ່ມນັ້ນເອງ"

## ພຣະນິມິດ ບົດທີ 2

2:1 "ໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອຢູ່ເມືອງ ເອເຟໂຊ ວ່າ 'ເພິ່ນຜູ້ທີ່ຖືດາວ
ທັງເຈັດດວງໄວ້ໃນມືຂວາຂອງເພິ່ນນັ້ນ ກັບຍ່າງຢູ່ລະຫວ່າງກາງໂຄມໄຟທອງຄຳ
ເຈັດອັນ ເພິ່ນໄດ້ເວົ້າວ່າຈັ່ງຊີ້
2:2 ເຮົາຮູ້ຈັກການງານຂອງພວກເຈົ້າ ກັບຮູ້ຈັກຄວາມເມື່ອຍລ້າກັບຄວາມອົດທົນ
ຂອງພວກເຈົ້າ ກັບຮູ້ຈັກວ່າພວກເຈົ້າບໍ່ສາມາດທົນເອົາຕໍ່ຄົນຊົ່ວ ແລ້ວພວກເຈົ້າ
ໄດ້ທົດສອບຄົນພວກນັ້ນທີ່ຫາວ່າເປັນທູດພິເສດ ຊຶ່ງເຂົາບໍ່ໄດ້ເປັນ ແຕ່ໄດ້ພິສູດ
ວ່າເປັນຄົນຕົວະ
2:3 ແລ້ວວ່າພວກເຈົ້າໄດ້ທົນສູ້ເອົາດ້ວຍຄວາມພຽນ ກັບໄດ້ເຮັດການງານໂດຍໄດ້
ເຫັນແກ່ນາມຂອງເຮົາ ແລ້ວບໍ່ໄດ້ເກີດເມື່ອຍລ້າອ່ອນກຳລັງ
2:4 ຈັ່ງໃດກໍຕາມ ເຮົາຍັງມີລາງແນວທີ່ຊິວ່າພວກເຈົ້າ ຄື ພວກເຈົ້າໄດ້ອອກໄປ
ຈາກຄວາມຮັກອັນຕົ້ນສະບັບຂອງພວກເຈົ້າ
2:5 ຈັ່ງຊັ້ນ ໃຫ້ຈົດຈື່ສະພາບເດີມ ທີ່ພວກເຈົ້າໄດ້ຕົກລົງຈາກຫັ້ນ ແລ້ວຈັ່ງໃຫ້ກັບ-
ໃຈໃໝ່ເດີ້ ເຮັດຕາມແນວດີອັນເດີມ ບໍ່ຊັ້ນ ເຮົາຊິມາຫາເຈົ້າຢ່າງໄວໆ ແລ້ວຍົກ
ໂຄມໄຟຂອງພວກເຈົ້າອອກໄປ ນອກຈາກພວກເຈົ້າກັບໃຈໃໝ່
2:6 ແຕ່ວ່າ ພວກເຈົ້າຍັງມີຂໍ້ດີທີ່ວ່າ ພວກເຈົ້າຊັງການງານຂອງພວກ ນີໂກລາໂອ
ນັ້ນ ຊຶ່ງເຮົາເອງກໍຍັງຊັງຄືກັນ
2:7 ໃຜມີຫູກໍໃຫ້ຟັງເອົາ ໂລດ ເດີ້ ແນວທີ່ ພຣະວິນຍານ ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ ຄືຜູ້ໃດມີໄຊ ເຮົາຊິໃຫ້ຜູ້ນັ້ນກິນໝາກຂອງກົກໄມ້ທີ່ໃຫ້ຊີວິດ ຊຶ່ງກົກນັ້ນຢູ່
ຫວ່າງກາງເມືອງສຸກຂະເສີມຂອງພຣະເຈົ້າ'

2:8 ແລ້ວໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອໃນເມືອງ *ຊະມີນາ* ວ່າ ‘ເຮົາຜູ້
ເປັນຕົ້ນກັບເປັນປາຍ ຄືຜູ້ທີ່ເຄີຍຕາຍແລ້ວໄດ້ເປັນຂຶ້ນມາອີກ ວ່າ
2:9 ເຮົາຮູ້ຈັກການງານ ຄວາມທຸກຍາກລຳບາກ ກັບຄວາມຍາກຈົນຂອງພວກເຈົ້າ
(ແມ່ນແຕ່ພວກເຈົ້າເປັນຄົນຮັ່ງມີ) ກັບເຮົາຮູ້ຈັກເລື່ອງການໝິ່ນປະມາດຂອງຄົນ
ພວກນັ້ນ ທີ່ຫາວ່າເຂົາເປັນຄົນ *ຢິວ* ແຕ່ວ່າບໍ່ໄດ້ເປັນອີຫລີ ແຕ່ເປັນກຸ່ມຊຸມນຸມ
ຂອງພະຍາມານຊາຕານ
2:10 ຢ່າສູ່ຢ້ານຄວາມທຸກທໍລະມານນັ້ນເດີ້ ຊຶ່ງພວກເຈົ້າຊິຕ້ອງທົນເອົາ ນີ້ແຫລະ
ໃນບໍ່ດົນນານ *ພະຍາມານ* ຊິຂັງຜູ້ລາງຄົນໃນພວກເຈົ້າໄວ້ໃນຄຸກເພື່ອລອງໃຈ
ພວກເຈົ້າ ແລ້ວພວກເຈົ້າຊິໄດ້ຖືກຄວາມທຸກທໍລະມານຮອດສິບມື້ ແຕ່ໃຫ້ຈົ່ງຮັກ
ພັກດີຕໍ່ເຮົາແມ່ນແຕ່ຮອດຕາຍ ແລ້ວເຮົາຊິມອບມົງກຸດຊີວິດໃຫ້ເຈົ້າ
2:11 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ ຄືຜູ້ມີໄຊ ຄວາມຕາຍເທື່ອທີ່ສອງນັ້ນ ຊິບໍ່ອັນຕະລາຍຕໍ່ເຂົາດອກ’
2:12 ແລ້ວໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອຢູ່ເມືອງ *ເປຄາໂມ* ວ່າ ‘ເຮົາຜູ້ຖື
ດາບສອງຄົມຊຶ່ງຄົມໆ ເວົ້າວ່າ
2:13 ເຮົາຮູ້ຈັກການງານຂອງພວກເຈົ້າ ກັບໝ້ອງຢູ່ຂອງພວກເຈົ້ານຳ ຊຶ່ງຢູ່ໝ້ອງ
ບັນລັງປົກຄອງຂອງພະຍາມານຊາຕານນັ້ນ ແຕ່ວ່າພວກເຈົ້າໄດ້ຢຶດໝັ້ນໃນນາມ
ຂອງເຮົາ ກັບບໍ່ໄດ້ປະຕິເສດຄວາມເຊື່ອໃນເຮົາ ແມ່ນແຕ່ໃນຍາມທີ່ ນາຍ *ອັນຕິ-
ປາ* ຜູ້ເປັນພະຍານທີ່ຈົ່ງຮັກພັກດີຕໍ່ເຮົາ ໄດ້ຖືກຂ້າຢູ່ໃນທ່າວງກາງພວກເຈົ້າ ໃນ
ໝ້ອງທີ່ພະຍາມານຊາຕານຢູ່ຫັ້ນ
2:14 ແຕ່ວ່າ ເຮົາມີລາງແນວທີ່ຊິວ່າພວກເຈົ້າ ຄືມີຜູ້ລາງຄົນໃນພວກເຈົ້າທີ່ຖືຫລັກ-
ຄຳສອນຂອງ *ບາລາອັມ* ຜູ້ເຄີຍສອນ *ບາລາກ* ໃຫ້ວາງກັບດັກໃຫ້ຊົນຊາດ *ອິສະ-
ຣາເອນ* ສະດຸດຫລົງຜິດ ຄືໃຫ້ເຂົາກິນຂອງທີ່ບູຊາຕໍ່ຮູບເຄົາລົບ ກັບໃຫ້ຫລິ້ນຊູ້
2:15 ກັບວ່າ ພວກເຈົ້າກໍຍັງມີຜູ້ລາງຄົນທີ່ຖືຫລັກຄຳສອນຂອງພວກ *ນິໂກລາໂອ*
ຊຶ່ງເປັນແນວທີ່ເຮົາຊັງ
2:16 ຈັ່ງຊັ້ນ ໃຫ້ກັບໃຈໃໝ່ເດີ້ ບໍ່ຊັ່ນ ເຮົາຊິມາຫາພວກເຈົ້າຢ່າງໄວໆ ແລ້ວຊິຕໍ່ສູ້
ກັບພວກເຂົາດ້ວຍດາບພຣະແສງຊຶ່ງຢູ່ໃນປາກຂອງເຮົາ

2:17 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ ຄືຜູ້ທີ່ມີໄຊ ເຮົາຊິໃຫ້ມານາອັນເລິກລັບເປັນອາຫານທິບໃຫ້ຜູ້ນັ້ນກິນ ກັບ
ຊິມອບກ້ອນຫີນຂາວນ້ອຍໃຫ້ຜູ້ນັ້ນ ແລ້ວໃນຫີນນັ້ນມີຊື່ໃໝ່ຈາລຶກໄວ້ຊຶ່ງບໍ່ມີໃຜຮູ້
ນອກຈາກຜູ້ຮັບຫີນເທົ່ານັ້ນ'
2:18 ແລ້ວໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອໃນເມືອງ *ທົວເຕຣາ* ວ່າ ' *ພຣະ-
ບຸດ* ຂອງພຣະເຈົ້າ ຜູ້ເພິ່ນມີຕາເປັນແສງຄືແປວໄຟ ກັບມີຕີນຄືທອງເຫລືອງອອກ
ເງົາ ເວົ້າວ່າ
2:19 ເຮົາຮູ້ຈັກການງານຂອງພວກເຈົ້າ ກັບຄວາມຮັກ ການຮັບໃຊ້ ຄວາມເຊື່ອ ກັບ
ຄວາມພຽນຂອງເຈົ້າ ກັບຮູ້ຈັກວ່າ ໃນບັ້ນປາຍການງານຂອງພວກເຈົ້າກໍມີຫລາຍ-
ກວ່າທຳອິດ
2:20 ຈັ່ງໃດກໍຕາມ ເຮົາມີລາງແນວທີ່ຊິວ່າພວກເຈົ້າ ຄືພວກເຈົ້າຍອມໃຫ້ແມ່ຍິງນັ້ນ
ຄື *ເຢຊາເບັນ* ຊຶ່ງເຂົາວ່າໂຕເອງເປັນຜູ້ພະຍາກອນ ຈັ່ງໄດ້ຍອມໃຫ້ນາງສອນ
ກັບລໍ້ໃຈພວກຜູ້ຮັບໃຊ້ຂອງເຮົາຫລົງຫລິ້ນຊູ້ ກັບໃຫ້ກິນຂອງບູຊາຕໍ່ຮູບເຄົາລົບ
2:21 ແລ້ວເຮົາເຄີຍໃຫ້ນາງມີໂອກາດກັບໃຈຈາກການຫລິ້ນຊູ້ຂອງເຂົາ ແຕ່ນາງບໍ່
ໄດ້ກັບໃຈເລີຍ
2:22 ນີ້ແຫລະ ເຮົາຊິຂວ້າງນາງລົງໃນຕຽງຄົນໄຂ້ ແລ້ວຝ່າຍພວກຄົນທີ່ມີຊູ້ກັບ
ນາງ ເຮົາກໍຊິໃຫ້ສູ່ຄວາມທຸກທໍລະມານ ນອກຈາກວ່າພວກເຂົາກັບໃຈໃໝ່ຈາກ
ການງານອັນຊົ່ວຂອງເຂົາ
2:23 ແລ້ວເຮົາຊິປະຫານລູກໆ ຂອງເຂົາ ແລ້ວກຸ່ມຜູ້ເຊື່ອທັງຫລາຍກໍຊິຮູ້ຈັກວ່າ
ເຮົາເປັນຜູ້ກວດສອບຄວາມນຶກຄຶດກັບເຈດຕະນາໃຈຂອງຄົນ ແລ້ວເຮົາຊິມອບ
ລາງວັນໃຫ້ພວກເຈົ້າຄູ່ຄົນສົມກັບການງານຂອງແຕ່ລະຄົນ
2:24 ແຕ່ສຳລັບພວກເຈົ້າກັບຄົນອື່ນໆ ຢູ່ເມືອງ *ທົວເຕຣາ* - ຜູ້ທີ່ບໍ່ໄດ້ຫລົງໃນຄຳ
ສອນຂອງນາງນັ້ນ ກັບບໍ່ໄດ້ຮຽນຮູ້ໃນແນວເລິກລັບຂອງພະຍາມານຊາຕານຕາມ
ທີ່ເຂົາເວົ້າກັນຢູ່ຫັ້ນ - ເຮົາຊິບໍ່ວາງພາລະອື່ນໆ ໃສ່ພວກເຈົ້າອີກດອກ
2:25 ແຕ່ໃຫ້ຍຶດໝັ້ນໃນຄວາມຈິງທີ່ພວກເຈົ້າມີ ຈົນກວ່າເຮົາຊິມາເດີ້

2:26 ຄືຜູ້ໃດມີໄຊ ກັບໄດ້ຮັກສາການງານຂອງເຮົາໄວ້ຈົນຮອດທີ່ສຸດ "ເຮົາກໍຊິມອບ
ອໍານາດໃນການຄອບຄອງໝູ່ປະຊາຊາດທັງຫລາຍໃຫ້ຜູ້ນັ້ນ"
2:27 ກັບຜູ້ນັ້ນຊິຄອບຄອງເຂົາທັງຫລາຍດ້ວຍຄະທາເຫລັກ ຄືກັນກັບໝໍ້ດິນຂອງ
ຊ່າງໝໍ້ທີ່ຖືກຕີແຕກເປັນທ່ອນໆ ຕາມທີ່ເຮົາໄດ້ຮັບຄໍາສັ່ງຈາກພຣະເຈົ້າຜູ້ເປັນພໍ່
ເຮົາ
2:28 ແລ້ວເຮົາຊິມອບດາວຮຸ່ງໃຫ້ຜູ້ນັ້ນ
2:29 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ'"

## ພຣະນິມິດ ບົດທີ 3

3:1 "ແລ້ວໃຫ້ຂຽນເຖິງເທວະທູດປະຈໍາກຸ່ມຜູ້ເຊື່ອໃນເມືອງ *ຊາເດ* ວ່າ 'ເພິ່ນຜູ້ມີ
ວິນຍານທັງເຈັດຂອງພຣະເຈົ້າ ກັບມີດາວເຈັດດວງນັ້ນ ເວົ້າວ່າ "ເຮົາຮູ້ຈັກການ
ງານຂອງພວກເຈົ້າ ທີ່ໄດ້ຊື່ວ່າມີຊີວິດຢູ່ ແຕ່ວ່າພວກເຈົ້າຢູ່ໃນສະພາບຕາຍແລ້ວ
3:2 ໃຫ້ພວກເຈົ້າຕື່ນໂຕລະວັງໃຫ້ດີ ໃຫ້ເສີມກໍາລັງສ່ວນທີ່ຍັງເຫລືອຢູ່ທີ່ໃກ້ຊິຕາຍ
ແລ້ວ ໃຫ້ມັນແຂງແຮງຂຶ້ນເດີ້ ຍ້ອນເຮົາໄດ້ຮັບວ່າ ການງານຂອງພວກເຈົ້າບໍ່ດີ
ພ້ອມຕໍ່ໜ້າພຣະເຈົ້າ
3:3 ຈັ່ງຊັ້ນ ໃຫ້ພວກເຈົ້າຈົດຈື່ແນວທີ່ເຄີຍໄດ້ຮັບໄດ້ຟັງແລ້ວນັ້ນເດີ້ ແລ້ວໃຫ້ຍຶດ-
ໝັ້ນ ກັບໃຈໃໝ່ເດີ້ ຈັ່ງຊັ້ນ ຄັ່ນເຈົ້າບໍ່ເຝົ້າລະວັງ ເຮົາຊິມາຫາເຈົ້າຄືຄົນຂະໂມຍ
ແລ້ວພວກເຈົ້າຊິບໍ່ຮູ້ຈັກວ່າເຮົາຊິມາຫາເຈົ້າໃນໂມງໃດ
3:4 ແລ້ວກໍມີຊື່ຂອງຜູ້ລາງຄົນ ແມ່ນແຕ່ຢູ່ໃນເມືອງ *ຊາເດ* ນັ້ນ ຊຶ່ງວ່າ ເສື້ອຜ້າຂອງ
ເຂົາບໍ່ໄດ້ເຮັດໃຫ້ເປື້ອນມົນທິນ ແລ້ວເຂົາພວກນັ້ນຊິດໍາເນີນກັບເຮົາໂດຍນຸ່ງສີ
ຂາວ ຍ້ອນວ່າພວກເຂົາສົມຄວນ
3:5 ຝ່າຍຜູ້ມີໄຊ ຜູ້ນັ້ນກໍຊິນຸ່ງເສື້ອຄຸມຍາວສີຂາວ ແລ້ວເຮົາຊິບໍ່ໄດ້ລົບຊື່ຜູ້ນັ້ນ
ອອກຈາກໜັງສືແຫ່ງຊີວິດ ແຕ່ເຮົາຊິຮັບຮອງຊື່ຜູ້ນັ້ນຕໍ່ພຣະເຈົ້າຜູ້ເປັນພໍ່ຂອງເຮົາ
ກັບຕໍ່ໜ້າໝູ່ເທວະທູດທັງຫລາຍຂອງເພິ່ນນໍາ"
3:6 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ'

3:7 ແລ້ວໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອຢູ່ເມືອງ *ຟີລາເດັນເຟຍ* ວ່າ ‘ເພິ່ນ
ຜູ້ບໍລິສຸດ ຜູ້ສັດຈິງ ຜູ້ເພິ່ນທີ່ຖືລູກກຸນແຈຂອງກະສັດ *ດາວິດ* ຄືເພິ່ນເປີດແລ້ວບໍ່ມີ
ໃຜຊິປິດໄດ້ ກັບປິດແລ້ວບໍ່ມີໃຜຊິເປີດໄດ້ ຈັ່ງເວົ້າວ່າ
3:8 “ເຮົາຮູ້ຈັກການງານຂອງພວກເຈົ້າ ນີ້ແຫລະ ເຮົາໄດ້ເປີດປະຕູໄວ້ຕໍ່ໜ້າພວກ
ເຈົ້າແລ້ວ ແລ້ວບໍ່ມີໃຜສາມາດປິດໄດ້ເລີຍ ຍ້ອນວ່າເຈົ້າຍັງມີແຮງເຫລືອຢູ່ນ້ອຍໆ
ຊຶ່ງເຈົ້າໄດ້ຮັກສາຖ້ອຍຄຳຂອງເຮົາໄວ້ ກັບບໍ່ໄດ້ປະຕິເສດນາມຂອງເຮົາ
3:9 ນີ້ແຫລະ ເຮົາຊິເຮັດໃຫ້ພວກກຸ່ມຊຸມນຸມຂອງພະຍາມານຊາຕານທີ່ຕົວະວ່າ
ເປັນຄົນ *ຢິວ* ແຕ່ບໍ່ໄດ້ເປັນ ນີ້ແຫລະ ເຮົາຊິເຮັດໃຫ້ເຂົາໝອບຂາບລົງແທບຕີນ
ຂອງເຈົ້າ ກັບໃຫ້ເຂົາຮູ້ວ່າເຮົາຮັກພວກເຈົ້າ
3:10 ຍ້ອນວ່າ ເຈົ້າໄດ້ຮັກສາຄຳສັ່ງຂອງເຮົາທີ່ວ່າ ໃຫ້ອົດທົນຢ່າງພາກພຽນ ຈັ່ງ-
ຊັ້ນ ເຮົາຊິປົກປ້ອງຮັກສາພວກເຈົ້າໄວ້ຈາກຍາມທົດລອງນັ້ນນຳ ແນວທີ່ຊິເກີດ
ຂຶ້ນທົ່ວທັງໂລກ ເປັນການທົດສອບໃຈຂອງໝົດຄູ່ຄົນທີ່ຢູ່ທົ່ວແຜ່ນດິນໂລກ
3:11 ນີ້ແຫລະ ເຮົາຊິມາໄວໆ ໃຫ້ຢຶດໝັ້ນໃນແນວທີ່ເຈົ້າມີຢູ່ເດີ້ ເພື່ອບໍ່ໃຫ້ຜູ້ໜຶ່ງຜູ້-
ໃດຊິງເອົາມົງກຸດຂອງເຈົ້າໄປໄດ້
3:12 ຄືຜູ້ໃດມີໄຊ ເຮົາຊິເຮັດໃຫ້ຜູ້ນັ້ນເປັນເສົາຫລັກໃນພຣະວິຫານຂອງພຣະເຈົ້າ
ຂອງເຮົາ ກັບຜູ້ນັ້ນຊິບໍ່ອອກໄປພາຍນອກອີກເລີຍ ກັບເຮົາຊິຈາລຶກພຣະນາມ
ພຣະເຈົ້າໄວ້ທີ່ຜູ້ນັ້ນ ກັບຊື່ເມືອງຂອງພຣະເຈົ້າເຮົານຳ ຄື *ກຸງເຢຣູຊາເລັມ* ໃໝ່ ທີ່
ລົງມາຈາກສະຫວັນຈາກພຣະເຈົ້າເຮົາ ກັບເຮົາຊິຈາລຶກນາມໃໝ່ຂອງເຮົາໄວ້ທີ່
ຜູ້ນັ້ນນຳ”
3:13 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ’
3:14 ແລ້ວໃຫ້ຂຽນເຖິງເທວະທູດປະຈຳກຸ່ມຜູ້ເຊື່ອຢູ່ເມືອງ *ລາວດີເກອາ* ວ່າ ‘ຜູ້ເພິ່ນ
ຊຶ່ງເປັນ “ອາເມນ” ກັບໄດ້ເປັນພະຍານຜູ້ຈົ່ງຮັກພັກດີກັບສັດຈິງ ກັບເປັນຕົ້ນເຫດ
ຂອງໝົດຄູ່ອັນຄູ່ແນວທີ່ພຣະເຈົ້າໄດ້ສ້າງ ເວົ້າວ່າ

3:15 "ເຮົາຮູ້ຈັກການງານຂອງພວກເຈົ້າ ຄືພວກເຈົ້າເປັນຄົນຊື່ໆ ຊ່າໆ ຢູ່ ເຢັນກໍບໍ່
ເຢັນ ຮ້ອນກໍບໍ່ຮ້ອນ ເຮົາຈັ່ງປາດຖະໜາຢາກໃຫ້ເຈົ້າເປັນຄົນເຢັນ ຫລືວ່າເປັນຄົນ
ຮ້ອນ
3:16 ຈັ່ງຊັ້ນ ຍ້ອນວ່າພວກເຈົ້າເປັນແຕ່ອຸ່ນໆ ບໍ່ເຢັນກັບບໍ່ຮ້ອນ ເຮົາຊິຄາຍພວກ
ເຈົ້າອອກຈາກປາກຂອງເຮົາ *ໂລດ*
3:17 ຍ້ອນພວກເຈົ້າໄດ້ເວົ້າວ່າ - ເຮົາເປັນຄົນຮັ່ງມີ ໄດ້ຊັບສົມບັດຫລາຍ ບໍ່ໄດ້
ຂາດອີຫຍັງເລີຍ - ພວກເຈົ້າບໍ່ຮູ້ບໍ້ວ່າ ພວກເຈົ້າເປັນຄົນສົມເພດ ເປັນຄົນຍາກ
ແຄ້ນ ເປັນຄົນທຸກຍາກລໍາບາກ ເປັນຄົນຕາບອດ ກັບເປັນຄົນເປືອຍບໍ່
3:18 ເຮົາແນະນໍາພວກເຈົ້າວ່າ ໃຫ້ຊື້ທອງຄໍາທີ່ຫລອມໄຟໃຫ້ບໍລິສຸດຈາກເຮົາ ເພື່ອ
ພວກເຈົ້າຊິເປັນຄົນຮັ່ງມີອີຫລີ ກັບຊື້ເສື້ອຂາວໃຫ້ມີແນວນຸ່ງໄດ້ ເພື່ອປົກປິດ
ຄວາມລະອາຍຍ້ອນການເປືອຍບໍ່ຂອງເຈົ້າ ກັບຊື້ຢາຮັກສາຕາຂອງເຈົ້າເພື່ອຊິ
ເບິ່ງເຫັນໄດ້
3:19 ຜູ້ໃດທີ່ເຮົາຮັກ ເຮົາກໍຕັກເຕືອນວ່າກ່າວຜູ້ນັ້ນ  ຈັ່ງຊັ້ນ ໃຫ້ກະຕືລືລົ້ນກັບໃຈໃ
ໝ່ເດີ້
3:20 ນີ້ແຫລະ ເຮົາຢືນເຄາະປະຕູຂອງເຈົ້າ ຄັ່ນຜູ້ໃດໄດ້ຍິນສຽງຂອງເຮົາ ແລ້ວ
ເປີດປະຕູ ເຮົາກໍຊິເຂົ້າຢູ່ນໍາຜູ້ນັ້ນ ກັບຊິກິນເຂົ້າປາອາຫານນໍາເຂົາ ແລ້ວເຂົາກໍຊິ
ກິນນໍາເຮົາ
3:21 ຄືຜູ້ໃດມີໄຊ ເຮົາຊິອະນຸຍາດໃຫ້ຜູ້ນັ້ນນັ່ງກັບເຮົາເທິງພຣະທີ່ນັ່ງຂອງເຮົາ ຄື-
ກັນກັບທີ່ເຮົາມີໄຊ ແລ້ວໄດ້ນັ່ງກັບພຣະເຈົ້າຜູ້ເປັນພໍ່ຂອງເຮົາ ຢູ່ພຣະທີ່ນັ່ງຂອງ
ເພິ່ນ"
3:22 ໃຜມີຫູກໍໃຫ້ຟັງເອົາ *ໂລດ* ເດີ້ ແນວທີ່ *ພຣະວິນຍານ* ພວມບອກກຸ່ມຜູ້ເຊື່ອທັງ-
ຫລາຍ'"

## ພຣະນິມິດ ບົດທີ 4

4:1 ຕໍ່ຈາກຫັ້ນມາ ຜູ້ຂ້າໄດ້ຫລຽວເບິ່ງ ແລ້ວນີ້ແຫລະ ມີປະຕູໃນສະຫວັນຖືກເປີດ
ໄວ້ ແລ້ວສຽງເວົ້າເທື່ອແຮກທີ່ຜູ້ຂ້າໄດ້ຍິນນັ້ນຄືສຽງແກ ເວົ້າວ່າ "ໃຫ້ຂຶ້ນມານີ້ເດີ້
ແລ້ວເຮົາຊິໃຫ້ເຈົ້າເບິ່ງເຫດການທີ່ຊິຕ້ອງເປັນໄປໃນພາຍໜ້າ"

4:2 ໃນຍາມນັ້ນພໍດີ ຈິດໃຈຂອງຜູ້ຂ້າພະວັງຢູ່ໃນ ພຣະວິນຍານ ແລ້ວນີ້ແຫລະ
ເຫັນມີພຣະທີ່ນັ່ງຕັ້ງຢູ່ໃນສະຫວັນ ກັບມີຜູ້ໜຶ່ງນັ່ງເທິງພຣະທີ່ນັ່ງນັ້ນ
4:3 ກັບເພິ່ນຜູ້ທີ່ນັ່ງເທິງພຣະທີ່ນັ່ງນັ້ນ ມີລັກສະນະຄືຢຶກັບພິລາ ແລ້ວກໍມີຮຸ້ງກິນ-
ນໍ້າລ້ອມຮອບພຣະທີ່ນັ່ງນັ້ນ ມີລັກສະນະຄືມໍລະກົດ
4:4 ແລ້ວລ້ອມຮອບພຣະທີ່ນັ່ງນັ້ນກໍມີທີ່ນັ່ງອີກຊາວສີ່ທີ່ນັ່ງ ແລ້ວຜູ້ຂ້າໄດ້ເຫັນຜູ້-
ຫລັກຜູ້ໃຫຍ່ຊາວສີ່ຄົນນັ່ງຢູ່ ແລ້ວພວກເຂົາຄູ່ຄົນໄດ້ນຸ່ງເສື້ອຄຸມຍາວສີຂາວ ກັບມີ
ມົງກຸດທອງຄໍາສວມຢູ່ເທິງຫົວ
4:5 ແລ້ວກໍມີຟ້າແມບຟ້າຮ້ອງ ກັບສຽງເວົ້າຕ່າງໆ ອອກມາຈາກພຣະທີ່ນັ່ງນັ້ນ ກັບ
ມີໂຄມໄຟເຈັດດວງຈຸດໄວ້ກົງໜ້າພຣະທີ່ນັ່ງ ຊຶ່ງເປັນວິນຍານທັງເຈັດຂອງພຣະ-
ເຈົ້າ
4:6 ກັບຕໍ່ໜ້າພຣະທີ່ນັ່ງນັ້ນໄດ້ມີທະເລແກ້ວ ມີລັກສະນະໃສໆ ຄືແກ້ວຜະຫລຶກ
ແລ້ວຢູ່ຫວ່າງກາງກັບຢູ່ລ້ອມຮອບພຣະທີ່ນັ່ງນັ້ນມີສັດສີ່ໂຕ ຊຶ່ງສັດນັ້ນມີຕາເຕັມ
ທັງທາງໜ້າກັບທາງຫລັງ
4:7 ສັດໂຕທີ່ໜຶ່ງນັ້ນຄືສິງໂຕ ສັດໂຕທີ່ສອງນັ້ນຄືລູກງົວ ສັດໂຕທີ່ສາມນັ້ນມີໜ້າຄື
ຄົນ ກັບສັດໂຕທີ່ສີ່ຄືນົກອິນທີທີ່ພວມບິນ
4:8 ແລ້ວສັດທັງສີ່ນັ້ນແຕ່ລະໂຕກໍມີປີກຫົກປີກ ກັບມີຕາເຕັມໂຕ ກັບໄດ້ຮ້ອງຕະ-
ຫລອດມື້ຕະຫລອດຄືນບໍ່ໄດ້ຢູ່ໄດ້ເຊົາວ່າ “ບໍລິສຸດ ບໍລິສຸດ ບໍລິສຸດ ອົງພຣະຜູ້-
ເປັນເຈົ້າ ຜູ້ເພິ່ນມີລິດທານຸພາບສູງສຸດ ຜູ້ດໍາລົງຢູ່ ທັງໃນອະດີດ ໃນປະຈຸບັນ ກັບ
ຊິມາໃນອະນາຄົດ”
4:9 ແລ້ວບັດຍາມສັດທັງສີ່ຖວາຍສະຫງ່າລາສີ ພຣະກຽດ ກັບການໂມທະນາທ່ານ
ແດ່ເພິ່ນຜູ້ນັ່ງເທິງພຣະທີ່ນັ່ງນັ້ນ ຜູ້ເພິ່ນດໍາລົງຢູ່ຕະຫລອດການເປັນນິດ
4:10 ແລ້ວຜູ້ຫລັກຜູ້ໃຫຍ່ທັງຊາວສີ່ຄົນນັ້ນກໍໝອບຂາບລົງຕໍ່ໜ້າເພິ່ນຜູ້ນັ່ງພຣະທີ່-
ນັ່ງນັ້ນ ກັບເຄົາລົບ ບູຊາເພິ່ນຜູ້ທີ່ດໍາລົງຢູ່ຕະຫລອດການເປັນນິດ ກັບຖອດມົງ-
ກຸດອອກ ວາງກົງໜ້າພຣະທີ່ນັ່ງນັ້ນ ແລ້ວຈົ່ງອອກສຽງກັນວ່າ

4:11 “ໂອ ຂ້າແຕ່ອົງພຣະຜູ້ເປັນເຈົ້າ ພຣະຜູ້ສົມຄວນທີ່ຊິຮັບສະຫງ່າລາສີ ພຣະ-
ກຽດ ກັບລິດທານຸພາບສູງສຸດ ຍ້ອນວ່າພຣະອົງໄດ້ສ້າງສັບພະສິ່ງທັງປວງ ແລ້ວ
ສັບພະສິ່ງທັງປວງທີ່ໄດ້ສ້າງນັ້ນ ຢູ່ໄດ້ໂດຍພຣະປະສົງຂອງພຣະອົງ”

## ພຣະນິມິດ ບົດທີ 5

5:1 ແລ້ວໃນມືຂວາຂອງເພິ່ນຜູ້ທີ່ນັ່ງຢູ່ພຣະທີ່ນັ່ງນັ້ນ ຜູ້ຂ້າໄດ້ເຫັນໜັງສືມ້ວນໜຶ່ງທີ່
ມີລາຍລັກອັກສອນຈາລຶກໄວ້ທັງຂ້າງໃນກັບດ້ານຫລັງ ແລ້ວມີຕາປະທັບຢູ່ເຈັດ
ດວງ
5:2 ກັບຜູ້ຂ້າໄດ້ເຫັນເທວະທູດຜູ້ໜຶ່ງທີ່ມີລິດອຳນາດ ປະກາດດ້ວຍສຽງດັ່ງວ່າ “ມີ
ຜູ້ໃດສົມຄວນແກະຕາປະທັບ ກາງໜັງສືມ້ວນນັ້ນອອກໄດ້”
5:3 ແລ້ວບໍ່ມີໃຜໃນສະຫວັນ ຫລືເທິງແຜ່ນດິນໂລກ ຫລືໃຕ້ແຜ່ນດິນທີ່ມີສິດ ສາ-
ມາດກາງໜັງສືມ້ວນນັ້ນອອກໄດ້ເລີຍ ຫລືແມ່ນແຕ່ເບິ່ງຊື່ໆ ກໍບໍ່ໄດ້
5:4 ຈັ່ງຊັ້ນ ຜູ້ຂ້າຈັ່ງຮ້ອງໄຫ້ຫລາຍ ຍ້ອນວ່າບໍ່ມີໃຜສົມຄວນທີ່ຊິກາງອອກອ່ານ
ໜັງສືມ້ວນນັ້ນໄດ້ເລີຍ ແມ່ນແຕ່ເບິ່ງຊື່ໆ ກໍຍັງບໍ່ໄດ້ຊ້ຳ
5:5 ແລ້ວມີຜູ້ຫລັກຜູ້ໃຫຍ່ຜູ້ໜຶ່ງໄດ້ບອກຜູ້ຂ້າວ່າ “ຢ່າສູ່ຮ້ອງໄຫ້ເລີຍເດີ້ ນີ້ແຫລະ
ຈອມສິງໂຕຂອງຕະກູນ ຢູດາ ເປັນຮາກເຫງົ້າຂອງກະສັດ ດາວິດ ເພິ່ນມີໄຊເໜືອ
ກວ່າຢູ່ແລ້ວ ຈັ່ງສາມາດແກະຕາປະທັບທັງເຈັດດວງນັ້ນ ແລ້ວກາງໜັງສືມ້ວນນັ້ນ
ອອກໄດ້”
5:6 ແລ້ວຢູ່ຫວ່າງກາງພຣະທີ່ນັ່ງກັບສັດທັງສີ່ນັ້ນ ກັບຢູ່ຫວ່າງກາງພວກຜູ້ຫລັກຜູ້-
ໃຫຍ່ ນີ້ແຫລະ ຜູ້ຂ້າຫລຽວເຫັນແກະນ້ອຍ ເບິ່ງຊົງຄືຖືກຂ້າມາແລ້ວ ມີເຂົາເຈັດ
ເຂົາ ກັບມີຕາເຈັດໜ່ວຍ ຊຶ່ງເປັນວິນຍານທັງເຈັດຂອງພຣະເຈົ້າທີ່ສົ່ງອອກໄປທົ່ວ
ແຜ່ນດິນໂລກ
5:7 ແລ້ວຜູ້ນັ້ນໄດ້ເຂົ້າມາຮັບເອົາມ້ວນໜັງສືຈາກມືຂວາຂອງເພິ່ນຜູ້ທີ່ນັ່ງເທິງ
ພຣະທີ່ນັ່ງ
5:8 ບັດເພິ່ນໄດ້ຮັບເອົາໜັງສືມ້ວນນັ້ນແລ້ວ ສັດທັງສີ່ ກັບຜູ້ຫລັກຜູ້ໃຫຍ່ຊາວສີ່ຄົນ
ນັ້ນ ກໍໝອບຂາບລົງຕໍ່ໜ້າແກະນ້ອຍ *ຂອງພຣະເຈົ້າ* ແລ້ວຊາວສີ່ຄົນນັ້ນມີພິນ

ກັບມີຂັນທອງຄໍາໃສ່ເຄື່ອງຫອມ ໄດ້ແກ່ຄໍາອະທິຖານຂອງພີ່ນ້ອງຄົນຂອງພຣະ-
ເຈົ້າຄູ່ຄົນ
5:9 ແລ້ວເຂົາທັງຫລາຍໄດ້ຮ້ອງເພງໃໝ່ ທີ່ວ່າ "ພຣະອົງສົມຄວນທີ່ຊິຮັບເອົາມ້ວນ
ໜັງສືນັ້ນ ກັບແກະຕາປະທັບຂອງມ້ວນນັ້ນອອກ ຍ້ອນວ່າ ພຣະອົງໄດ້ຖືກຂ້າ ຈັ່ງ
ໄຖ່ພວກເຮົາທັງຫລາຍ ອອກຈາກຄູ່ເຜົ່າ ຄູ່ພາສາ ຄູ່ພົງພັນ ກັບຄູ່ປະເທດ ໃຫ້ຄືນ
ດີກັນກັບພຣະເຈົ້າດ້ວຍພຣະໂລຫິດຂອງພຣະອົງ
5:10 ແລ້ວໄດ້ໂຜດໃຫ້ພວກເຮົາທັງຫລາຍເປັນລາຊະອານາຈັກປະໂລຫິດ ຕໍ່ພຣະ-
ເຈົ້າ ຂອງເຮົາ ແລ້ວພວກເຮົາກໍຊິຄອບຄອງຢູ່ເທິງແຜ່ນດິນໂລກ"
5:11 ແລ້ວຜູ້ຂ້າຫລຽວເບິ່ງ ແລ້ວຈັ່ງໄດ້ຍິນສຽງເທວະທູດຂະໜາດຫລາຍໆ ອົງ
ນັບເປັນໝື່ນເປັນແສນ ຮອດເປັນລ້ານໆ ຊຶ່ງຢູ່ອ້ອມພຣະທີ່ນັ່ງ ກັບອ້ອມສັດທັງສີ່
ກັບອ້ອມພວກຜູ້ຫລັກຜູ້ໃຫຍ່ນັ້ນນໍາ
5:12 ຈັ່ງອອກສຽງດັ່ງວ່າ "ແກະນ້ອຍຂອງພຣະເຈົ້າຜູ້ເພິ່ນຖືກຂ້າແລ້ວນັ້ນ ສົມຄວນ
ໄດ້ຮັບລິດທານຸພາບ ຊັບສົມບັດ ປັນຍາ ກໍາລັງອໍານາດ ກຽດຕິຍົດ ສະຫງ່າລາສີ
ກັບການສັນລະເສີນ"
5:13 ແລ້ວຜູ້ຂ້າໄດ້ຍິນສຽງການສັນລະເສີນຂອງໝົດຄູ່ອັນຄູ່ແນວທີ່ມີຊີວິດ ທັງໃນ
ສະຫວັນ ໃນແຜ່ນດິນໂລກ ໃຕ້ແຜ່ນດິນໂລກ ໃນມະຫາສະໝຸດ ກັບໝົດຄູ່ອັນຄູ່
ແນວທີ່ຢູ່ໃນຫັ້ນ ຮ້ອງກັນວ່າ "ຂໍໃຫ້ການສັນລະເສີນ ກັບພຣະກຽດ ກັບສະຫງ່າ-
ລາສີ ກັບລິດທານຸພາບສູງສຸດ ມີແດ່ເພິ່ນຜູ້ນັ່ງເທິງພຣະທີ່ນັ່ງ ກັບແດ່ແກະນ້ອຍ
ຂອງພຣະເຈົ້າຕະຫລອດການເປັນນິດ"
5:14 ແລ້ວສັດທັງສີ່ນັ້ນກໍຮ້ອງກັນວ່າ "ອາເມນ" ກັບຜູ້ຫລັກຜູ້ໃຫຍ່ທັງຊາວສີ່ຄົນນັ້ນ
ໄດ້ໝອບຂາບລົງເຄົາລົບບູຊາເພິ່ນຜູ້ທີ່ດໍາລົງຢູ່ຕະຫລອດການເປັນນິດ

## ພຣະນິມິດ ບົດທີ 6

6:1 ບັດນີ້ ຜູ້ຂ້າຫລຽວເບິ່ງ ເຫັນແກະນ້ອຍຂອງພຣະເຈົ້າ ໄດ້ແກະຕາປະທັບດວງ
ໜຶ່ງຂອງມ້ວນໜັງສືນັ້ນອອກແລ້ວ ຜູ້ຂ້າໄດ້ຍິນສັດໜຶ່ງໃນສັດທັງສີ່ນັ້ນ ຮ້ອງສຽງ-
ດັ່ງຄືສຽງຟ້າຮ້ອງ ເວົ້າວ່າ "ມາເບິ່ງເດີ້"

6:2 ແລ້ວຜູ້ຂ້າຫລຽວເບິ່ງ ແລ້ວນີ້ແຫລະ ເຫັນມ້າຂາວໂຕໜຶ່ງ ແລ້ວຜູ້ທີ່ຂີ່ມ້ານັ້ນມີ
ທະນູ ກັບມີມົງກຸດ ກັບຜູ້ນັ້ນອອກໄປຢ່າງມີໄຊ ເພື່ອມີໄຊຕໍ່
6:3 ແລ້ວບັດແກະນ້ອຍໄດ້ແກະຕາປະທັບດວງທີ່ສອງອອກແລ້ວ ຜູ້ຂ້າໄດ້ຍິນສັດ
ໂຕທີ່ສອງຮ້ອງວ່າ "ມາເບິ່ງເດີ້"
6:4 ແລ້ວມີມ້າອີກໂຕໜຶ່ງອອກໄປ ເປັນມ້າສີແດງສົດໆ ພໍຄືແປວໄຟ ແລ້ວຜູ້ທີ່ຂີ່ມ້າ
ໂຕນັ້ນ ໄດ້ຮັບອະນຸຍາດໃຫ້ຖອນສັນຕິພາບອອກຈາກແຜ່ນດິນໂລກໄປ ເພື່ອຄົນ
ຊິເກີດການຂ້າຟັນລັນແທງກັນ ແລ້ວຜູ້ນີ້ໄດ້ຮັບມອບດາບໃຫຍ່ຫລວງປື້ມໜຶ່ງ
6:5 ແລ້ວບັດແກະນ້ອຍໄດ້ແກະຕາປະທັບດວງທີ່ສາມອອກແລ້ວ ຜູ້ຂ້າໄດ້ຍິນສັດ
ໂຕທີ່ສາມຮ້ອງວ່າ "ມາເບິ່ງເດີ້" ແລ້ວຜູ້ຂ້າຫລຽວເບິ່ງ ແລ້ວນີ້ແຫລະ ຜູ້ຂ້າໄດ້ເຫັນ
ມ້າສີດຳມືດໂຕໜຶ່ງ ກັບຜູ້ທີ່ຂີ່ມ້ານັ້ນຖືຕາປະທັບຊັ່ງໃນມື
6:6 ແລ້ວຜູ້ຂ້າໄດ້ຍິນສຽງອອກມາຈາກສັດທັງສີ່ນັ້ນວ່າ "ເຂົ້າວີດລາຄາລິດລະໜຶ່ງ
ເດນາຣິອົນ ເຂົ້າບາເລສາມລິດຕໍ່ໜຶ່ງເດນາຣິອົນ ແລ້ວຢ່າທຳລາຍນ້ຳມັນໝາກ-
ກອກ ກັບເຫລົ້າອະງຸ່ນນັ້ນເດີ້"
6:7 ແລ້ວບັດແກະນ້ອຍໄດ້ແກະຕາປະທັບດວງທີ່ສີ່ອອກແລ້ວ ຜູ້ຂ້າໄດ້ຍິນສຽງສັດ
ໂຕທີ່ສີ່ຮ້ອງວ່າ "ມາເບິ່ງເດີ້"
6:8 ແລ້ວຜູ້ຂ້າຫລຽວເບິ່ງ ແລ້ວນີ້ແຫລະ ໄດ້ເຫັນມ້າສີຂຽວຊີດໆ ໂຕໜຶ່ງ ແລ້ວຜູ້ທີ່
ຂີ່ມ້າໂຕນັ້ນມີຊື່ວ່າ ຄວາມຕາຍ ແລ້ວແດນມໍລະນາໄດ້ຕິດຕາມຜູ້ນັ້ນໄປ ແລ້ວ
ພວກນີ້ໄດ້ຮັບມອບສິດອຳນາດເໜືອໜຶ່ງສ່ວນສີ່ຂອງແຜ່ນດິນໂລກ ເປັນອຳນາດ
ລ້າງຜານດ້ວຍດາບ ດ້ວຍຄວາມອຶດຢາກ ດ້ວຍຄວາມຕາຍ ກັບດ້ວຍພວກສັດປ່າ
ຮ້າຍຕ່າງໆ ຕາມພື້ນແຜ່ນດິນໂລກ
6:9 ບັດແກະນ້ອຍໄດ້ແກະຕາປະທັບດວງທີ່ຫ້າອອກແລ້ວ ຜູ້ຂ້າຫລຽວເບິ່ງຢູ່ຖານ-
ແທ່ນບູຊາ ເຫັນດວງວິນຍານຂອງຄົນທັງຫລາຍທີ່ຖືກຂ້າ ຍ້ອນເຫັນແກ່ ພຣະຄຳ
ຂອງພຣະເຈົ້າ ກັບຍ້ອນຄຳພະຍານຂອງເຂົາທີ່ເຂົາຖືເອົາຖືນັ້ນ
6:10 ແລ້ວເຂົາພວກນັ້ນຮ້ອງສຽງດັ່ງວ່າ "ໂອ ຂ້າແດ່ອົງພຣະຜູ້ເປັນເຈົ້າເອີຍ ຜູ້ບໍ-
ລິສຸດກັບສັດຈິງ ມັນຊິດົນນານສ່ຳໃດກ່ອນພຣະອົງຊິລົງໂທດລ້າງແຄ້ນຄົນເຮົາ
ທັງຫລາຍ ຍ້ອນເຫັນແກ່ເລືອດຂອງພວກເຮົາ ທີ່ພວກຄົນຢູ່ໃນໂລກເຮັດໃຫ້ຕົກ"

6:11 ແລ້ວເພິ່ນຈັ່ງມອບເສື້ອຄຸມຍາວສີຂາວ ໃຫ້ກັບຄົນພວກນັ້ນແຕ່ລະຄົນທີ່ຖືກ
ຂ້າ ກັບໄດ້ບອກພວກເຂົາໃຫ້ຄອງຖ້າອີກຈັກໜ່ອຍ ຈົນກວ່າໝູ່ຜູ້ຮັບໃຊ້ ພ້ອມກັບ
ພວກພີ່ນ້ອງຂອງເຂົາ ຊິຖືກຂ້າຄືກັນກັບພວກເຂົາໃຫ້ຄົບ
6:12 ແລ້ວບັດແກະນ້ອຍໄດ້ແກະຕາປະທັບດວງທີ່ຫົກອອກແລ້ວ ນີ້ແຫລະ ແຜ່ນ-
ດິນໄຫວຢ່າງຂະໜາດໃຫຍ່ ດວງຕະເວັນໄດ້ມືດລົງດຳຄືພໍຄືຜ້າກະສອບເຮັດ
ດ້ວຍຂົນສັດ ກັບດວງເດືອນໄດ້ກາຍເປັນສີເລືອດ
6:13 ກັບໝູ່ດາວທັງຫລາຍຢູ່ເທິງທ້ອງຟ້າ ໄດ້ຕົກລົງມາໃນແຜ່ນດິນໂລກ ຄືໝາກ-
ເດື່ອບໍ່ທັນສຸກ ຫລົ່ນລົງມາຈາກກົກຂອງມັນ ບັດລົມພະຍຸພັດແຮງໆ
6:14 ແລ້ວທ້ອງຟ້າໄດ້ຖອນອອກໄປ ພໍຄືໜັງສືມ້ວນຕອນເກັບຂຶ້ນໄປ ແລ້ວພູເຂົາຄູ່
ລູກກັບເກາະຄູ່ເກາະໄດ້ຂະຍັບຍົກຍ້າຍຈາກທີ່ເດີມຂອງມັນໄປ
6:15 ແລ້ວກະສັດທັງຫລາຍໃນໂລກ ພວກຄົນສຳຄັນໆ ພວກຄົນຮັ່ງມີ ພວກນາຍ
ທະຫານຜູ້ໃຫຍ່ ພວກຜູ້ມີອຳນາດ ພ້ອມກັບໝົດຄູ່ຄົນບໍ່ວ່າຊິເປັນຂ້າທາດຫລື ໄທ
ໄດ້ຫາໜ້ອງຫລົບລີ້ ຊ່ອນໂຕໄວ້ຢູ່ໃນຖ້ຳ ກັບໃນຮູໃນຊ່ອງໂຂດຫີນຕາມພູເຂົາ
6:16 ພວກເຂົາຈັ່ງຮ້ອງຂໍພູເຂົາກັບໂຂດຫີນວ່າ “ຂໍໃຫ້ລົ້ມທັບເຮົາແໜ່ທ້ອນ ຊ່ອນ
ເຮົາໄວ້ໃຫ້ພົ້ນຈາກໜ້າຂອງເພິ່ນຜູ້ນັ້ນທີ່ນັ່ງຢູ່ເທິງພຣະທີ່ນັ່ງ ກັບຈາກຄວາມໂມ-
ໂຫຂອງແກະນ້ອຍ *ຂອງພຣະເຈົ້າ* ແໜ່ທ້ອນ
6:17 ຍ້ອນວ່າ ມື້ກ້ຽວໂກດອັນໃຫຍ່ຫລວງຂອງເພິ່ນໃກ້ຊິມາຮອດມາເຖິງແລ້ວ
ແລ້ວແມ່ນໃຜຊິສາມາດທົນເອົາໄດ້”

## ພຣະນິມິດ ບົດທີ 7

7:1 ຫລັງຈາກເຫດການແນວໝູ່ນີ້ເປັນໄປແລ້ວ ຜູ້ຂ້າໄດ້ເຫັນເທວະທູດສີ່ອົງຢືນຢູ່ທີ່
ແຈມຸມທັງສີ່ຂອງແຜ່ນດິນໂລກ ຫ້າມລົມໄວ້ຈາກທິດທັງສີ່ຂອງແຜ່ນດິນໂລກ
ເພື່ອບໍ່ໃຫ້ພັດເທິງບົກ ຫລືໃນທະເລ ຫລືທີ່ກົກໄມ້ໃດໆ
7:2 ແລ້ວຜູ້ຂ້າໄດ້ເຫັນເທວະທູດອີກອົງໜຶ່ງລົງມາຈາກທິດຕະເວັນອອກ ອົງນັ້ນມີ
ດວງຕາປະທັບຂອງພຣະເຈົ້າຜູ້ດຳລົງຢູ່ ກັບໄດ້ຮ້ອງປະກາດດ້ວຍສຽງອັນດັງໃຫ້
ເທວະທູດທັງສີ່ນັ້ນ ທີ່ໄດ້ຮັບມອບອຳນາດໃຫ້ທຳລາຍແຜ່ນດິນກັບທະເລນັ້ນ

7:3 ແລ້ວເທວະທູດອົງນັ້ນເວົ້າວ່າ “ຢ່າທຳລາຍແຜ່ນດິນ ທະເລ ກັບພວກກົກໄມ້
ຈົນກວ່າເຮົາຊິປະທັບຕາໄວ້ທີ່ໜ້າຜາກຂອງຜູ້ຮັບໃຊ້ທັງຫລາຍຂອງພຣະເຈົ້າ
ຂອງເຮົາ”
7:4 ແລ້ວຜູ້ຂ້າໄດ້ຍິນເຖິງຈຳນວນຄົນຜູ້ທີ່ໄດ້ຮັບການປະທັບຕາ ແລ້ວຈຳນວນນັ້ນ
ຄື ໜຶ່ງແສນສີ່ໝື່ນສີ່ພັນຄົນ ຊຶ່ງມາຈາກສິບສອງຕະກູນຂອງຊົນຊາດ ອິສະຣາ-
ເອນ ນັ້ນ
7:5 ຈາກຕະກູນ ຢູດາ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະ-
ກູນ ຣູເບັນ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະກູນ ກາດ
ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ
7:6 ຈາກຕະກູນ ອາເຊ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະ-
ກູນ ເນບທາລີ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະກູນ
ມານາເຊ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ
7:7 ຈາກຕະກູນ ຊີເມໂອນ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກ
ຕະກູນ ເລວີ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະກູນ ອິ-
ຊາຄາ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ
7:8 ຈາກຕະກູນ ເຊບູໂລນ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກ
ຕະກູນ ໂຢເຊບ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ ຈາກຕະກູນ
ເບັນຢາມິນ ມີໜຶ່ງໝື່ນສອງພັນຄົນ ທີ່ໄດ້ຮັບການປະທັບຕາ
7:9 ຕໍ່ຈາກນັ້ນມາ ຜູ້ຂ້າຫລຽວເບິ່ງ ແລ້ວນີ້ແຫລະ ໄດ້ເຫັນຄົນຫລວງຫລາຍຊຶ່ງບໍ່ມີ
ໃຜສາມາດນັບໄດ້ເລີຍ ມາຈາກທຸກຊົນຊາດ ທຸກເຜົ່າພັນ ທຸກຕະກູນ ກັບທຸກພາສາ ນຸ່ງ
ເສື້ອຄຸມຍາວສີຂາວ ແລ້ວຖືໃບຕານໃນມື ຢືນຢູ່ໜ້າພຣະທີ່ນັ່ງ ກັບຕໍ່ໜ້າແກະ
ນ້ອຍຂອງພຣະເຈົ້າ
7:10 ຄົນຫລວງຫລາຍໝູ່ນັ້ນຮ້ອງສຽງດັ່ງວ່າ “ຄວາມລອດພົ້ນເປັນຂອງພຣະເຈົ້າ
ຂອງເຮົາຜູ້ນັ່ງເທິງພຣະທີ່ນັ່ງນັ້ນ ກັບຂອງແກະນ້ອຍຂອງເພິ່ນນຳ”

7:11 ແລ້ວເທວະທູດໝົດທັງປວງ ໄດ້ຢືນອ້ອມພຣະທີ່ນັ່ງ ກັບອ້ອມພວກຜູ້ຫລັກຜູ້-
ໃຫຍ່ ກັບອ້ອມສັດທັງສີ່ ແລ້ວໄດ້ໝອບຂາບລົງຕໍ່ໜ້າພຣະທີ່ນັ່ງ ຖວາຍນະມັດ-
ສະການພຣະເຈົ້າຢູ່ຫັ້ນ
7:12 ຮ້ອງອອກພ້ອມກັນວ່າ "ຂໍໃຫ້ ຄຳສາທຸການ ຄຳສັນລະເສີນ ສະຫງ່າລາສີ
ພຣະປັນຍາ ການໂມທະນາທ່ານ ກຽດຕິຍົດ ກຳລັງອຳນາດ ກັບລິດທານຸພາບ ມີ
ແດ່ພຣະເຈົ້າຂອງເຮົາ ຕະຫລອດການເປັນນິດ ອາເມນ"
7:13 ແລ້ວມີຜູ້ໜຶ່ງໃນພວກຜູ້ຫລັກຜູ້ໃຫຍ່ນັ້ນໄດ້ຖາມຜູ້ຂ້າວ່າ "ຄົນທີ່ນຸ່ງເສື້ອຄຸມ
ຍາວພວກນີ້ແມ່ນໃຜ ແລ້ວພວກເຂົາມາແຕ່ໃສ"
7:14 ຜູ້ຂ້າເລີຍຕອບ ລາວ ວ່າ "ນາຍເຈົ້າຂ້າ ນາຍຮູ້ຈັກດີຢູ່ແລ້ວ" ລາວ ຈັ່ງຕອບຜູ້-
ຂ້າວ່າ "ຄົນຫລວງຫລາຍນີ້ຄືຜູ້ຄົນທີ່ອອກມາຈາກຍາມທຸກເວທະນາອັນໃຫຍ່-
ຫລວງນັ້ນ ແລ້ວພວກເຂົາໄດ້ຊຳລະລາງເສື້ອຜ້າຂອງເຂົາໃຫ້ຂາວບໍລິສຸດ ໂດຍ
ໃນພຣະໂລຫິດຂອງແກະນ້ອຍຂອງພຣະເຈົ້າ
7:15 ຈັ່ງຊັ້ນ ເຂົາທັງຫລາຍໄດ້ຢູ່ຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າ ຮັບໃຊ້ເພິ່ນໃນ
ພຣະວິຫານຂອງເພິ່ນທັງກາງເວັນກັບກາງຄືນ ແລ້ວເພິ່ນຜູ້ນັ້ນທີ່ນັ່ງເທິງພຣະທີ່-
ນັ່ງ ຊິສະຖິດຢູ່ຫວ່າງກາງພວກເຂົາ
7:16 ແລ້ວພວກເຂົາຊິບໍ່ອຶດຢາກແນວກິນແນວດື່ມອີກ ແລ້ວເຂົາຊິບໍ່ຖືກແສງແດດ
ສ່ອງໃສ່ ຫລືຄວາມຮ້ອນແນວອື່ນໆ ອີກຕໍ່ໄປ
7:17 ຍ້ອນວ່າ ແກະນ້ອຍຂອງພຣະເຈົ້າ ຜູ້ຢູ່ເທິງພຣະທີ່ນັ່ງນັ້ນ ກໍຊິເບິ່ງແຍງເຂົາໄວ້
ກັບຊິນຳໄປຍັງນ້ຳພຸທີ່ບແຫ່ງຊີວິດ ແລ້ວພຣະເຈົ້າກໍຊິເຊັດນ້ຳຕາໝົດຄູ່ຍົດຈາກ
ຕາຂອງເຂົາ"

## ພຣະນິມິດ ບົດທີ 8

8:1 ແລ້ວບັດແກະນ້ອຍໄດ້ແກະຕາປະທັບດວງທີ່ເຈັດອອກແລ້ວ ໄດ້ມີຄວາມງຽບ
ສະຫງົບປົກຄຸມສະຫວັນໄວ້ ຢູ່ປະມານເຄິ່ງຊົ່ວໂມງ
8:2 ແລ້ວຜູ້ຂ້າໄດ້ເຫັນເທວະທູດທັງເຈັດອົງນັ້ນ ທີ່ຢືນຢູ່ຕໍ່ໜ້າພຣະເຈົ້າ ພວກເຂົາ
ໄດ້ຮັບມອບແກເຈັດຄັນ

8:3 ແລ້ວມີເທວະທູດອີກອົງໜຶ່ງທີ່ຖືກະຖາງໄຟທອງຄໍາ ໄດ້ອອກມາຢືນຢູ່ທີ່ແທ່ນ
ບູຊາ ແລ້ວອົງນັ້ນໄດ້ຮັບມອບເຄື່ອງຫອມເປັນອັນຫລາຍ ເພື່ອໃຫ້ຖວາຍ ພ້ອມ
ທັງຄໍາອະທິຖານຈາກຄົນຂອງພຣະເຈົ້າທັງປວງ ຢູ່ເທິງແທ່ນບູຊາທອງຄໍາຢູ່ຕໍ່ໜ້າ
ພຣະທີ່ນັ່ງນັ້ນ
8:4 ແລ້ວຄວັນຂອງເຄື່ອງຫອມນັ້ນ ພ້ອມທັງຄໍາອະທິຖານຈາກຄົນຂອງພຣະເຈົ້າ
ໄດ້ລອຍຂຶ້ນໄປຢູ່ຕໍ່ໜ້າພຣະເຈົ້າ ຈາກມືຂອງເທວະທູດນັ້ນ
8:5 ແລ້ວເທວະທູດອົງນັ້ນໄດ້ເອົາກະຖາງ ໃສ່ໄຟໃຫ້ເຕັມຈາກແທ່ນບູຊາ ແລ້ວຈັ່ງ
ຂວ້າງລົງໃສ່ແຜ່ນດິນໂລກ ແລ້ວມີສຽງຕ່າງໆ ອອກມາ ມີຟ້າຮ້ອງ ຟ້າຜ່າ ກັບ
ແຜ່ນດິນໄຫວ
8:6 ແລ້ວເທວະທູດເຈັດອົງທີ່ຖືແກທັງເຈັດນັ້ນ ຕ່າງກໍກຽມພ້ອມທີ່ຊິເປົ່າແກນໍາ
8:7 ບັດເທວະທູດອົງແຣກນັ້ນ ໄດ້ເປົ່າແກຂຶ້ນມາ ມີໝາກເຫັບກັບໄຟປົນກັນກັບ
ເລືອດ ກໍຖືກຂວ້າງລົງໃສ່ແຜ່ນດິນ ກົກໄມ້ໜຶ່ງໃນສາມຖືກໄຟໄໝ້ໄປ ກັບຫຍ້າ
ຂຽວສົດກໍຖືກໄຟໄໝ້ໄປໝົດ
8:8 ບັດເທວະທູດອົງທີ່ສອງເປົ່າແກຂຶ້ນມາ ໄດ້ມີແນວໜຶ່ງຄືພູເຂົາໄຟໃຫຍ່ພວມໄ
ໝ້ຢູ່ ໄດ້ຖືກຂວ້າງລົງໄປໃນທະເລ ແລ້ວນໍ້າທະເລໜຶ່ງໃນສາມສ່ວນໄດ້ກາຍເປັນ
ເລືອດ
8:9 ແລ້ວແນວມີຊີວິດຢູ່ໃນທະເລນັ້ນກໍຕາຍໄປໜຶ່ງໃນສາມສ່ວນ ກັບເຮືອກໍຖືກພັງ
ທໍາລາຍໄປໜຶ່ງໃນສາມສ່ວນນໍາ
8:10 ແລ້ວບັດເທວະທູດອົງທີ່ສາມນັ້ນໄດ້ເປົ່າແກຂຶ້ນມາ ກໍມີດາວຂະໜາດໃຫຍ່
ດວງໜຶ່ງ ເປັນແປວໄຟລຸກຮຸ່ງຄືໂຄມໄຟ ໄດ້ຕົກລົງມາຈາກທ້ອງຟ້າ ຢູ່ເທິງແມ່ນໍ້າ
ໜຶ່ງໃນສາມສ່ວນ ກັບຢູ່ເທິງແຫລ່ງນໍ້າພຸນໍາ
8:11 ແລ້ວດາວດວງນັ້ນມີຊື່ວ່າ ບໍລະເພັດ ແລ້ວລົດຊາດຂອງນໍ້າ ໜຶ່ງໃນສາມສ່ວນ
ນັ້ນ ມີລົດຊາດຂົມຝາດ ແລ້ວມີຄົນຫລວງຫລາຍໄດ້ຕາຍດ້ວຍນໍ້ານັ້ນ ຍ້ອນກາຍ-
ເປັນນໍ້າຂົມຝາດ

8:12 ແລ້ວບັດເທວະທູດອົງທີ່ສີ່ນັ້ນໄດ້ເປົ່າແກຂຶ້ນມາ ດວງຕະເວັນໄດ້ຖືກຟາດຕີ
ໃຫ້ມືດໄປໜຶ່ງໃນສາມສ່ວນ ພ້ອມທັງດວງເດືອນ ກັບດວງດາວທັງຫລາຍນຳ ຈັ່ງ
ມືດໄປໜຶ່ງໃນສາມສ່ວນ ກາງເວັນກໍບໍ່ແຈ້ງໜຶ່ງໃນສາມສ່ວນ ແລ້ວກາງຄືນກໍຄືກັນ
8:13 ແລ້ວຜູ້ຂ້າຫລຽວເຫັນ ມີເທວະທູດອົງໜຶ່ງພວມບິນເທິງທ້ອງຟ້າ ກັບໄດ້ຍິນ
ສຽງຮ້ອງດັງກ້ອງ ວ່າ “ຈິບຫາຍ ຈິບຫາຍ ຈິບຫາຍ ມີຕໍ່ຄົນທັງຫລາຍຢູ່ເທິງແຜ່ນ-
ດິນໂລກເດີ້ ຍ້ອນວ່າ ຊິມີສຽງແກອີກຈາກເທວະທູດທັງສາມອົງ ພ້ອມທີ່ຊິເປົ່າຢູ່
ແລ້ວ”

## ພຣະນິມິດ ບົດທີ 9

9:1 ແລ້ວບັດເທວະທູດອົງທີ່ຫ້າໄດ້ເປົ່າແກຂຶ້ນມາ ຜູ້ຂ້າໄດ້ເຫັນດາວດວງໜຶ່ງ ຕົກ
ລົງມາຈາກຟ້າສະຫວັນເທິງແຜ່ນດິນໂລກ ແລ້ວດວງນັ້ນໄດ້ຮັບມອບລູກກຸນແຈ
ຂອງເຫວເລິກອັນບໍ່ມີສຳເລັດ
9:2 ແລ້ວບັດພໍເທວະທູດອົງນັ້ນເປີດເຫວເລິກອັນບໍ່ມີສຳເລັດນັ້ນອອກ ໄດ້ມີຄວັນ
ພຸ່ງຂຶ້ນມາຄືຄວັນເຕົາໃຫຍ່ ຈັ່ງຊັ້ນ ດວງຕະເວັນກັບອາກາດກໍມືດໄປ ຍ້ອນຄວັນທີ່
ຂຶ້ນມາຈາກເຫວນັ້ນ
9:3 ແລ້ວມີຝູງຕັກແຕນໄດ້ບິນອອກຈາກຄວັນນັ້ນ ມາຍັງແຜ່ນດິນໂລກ ແລ້ວມັນ
ໄດ້ຮັບອຳນາດ ຄືອຳນາດຂອງແມງປ່ອງມີເທິງແຜ່ນດິນໂລກ
9:4 ແລ້ວພວກມັນຖືກສັ່ງໄວ້ວ່າ ບໍ່ໃຫ້ທຳລາຍພຸ່ມໄມ້ໃບຫຍ້າເທິງແຜ່ນດິນໂລກ
ກັບພືດຜົນກົກໄມ້ ແມ່ນແຕ່ກໍໄມ້ກໍຕອກແນວຊຽວໃດໆ ມີແຕ່ໃຫ້ເຮັດໃສ່ຜູ້ຄົນທັງ-
ຫລາຍທີ່ບໍ່ມີຕາຂອງພຣະເຈົ້າປະທັບຢູ່ເທິງໜ້າຜາກເທົ່ານັ້ນ
9:5 ແຕ່ບໍ່ໃຫ້ມັນຂ້າຄົນພວກນັ້ນ ພຽງແຕ່ໃຫ້ທໍລະມານພວກເຂົາເປັນເວລາຫ້າ
ເດືອນ ແລ້ວການທໍລະມານນັ້ນ ເຈັບທໍລະມານຄືຖືກແມງປ່ອງຕອດ
9:6 ແລ້ວໃນຍາມນັ້ນ ຄົນທັງຫລາຍຊິຊອກຫາຄວາມຕາຍແຕ່ຊິບໍ່ພໍ້ ເຂົາຢາກຊິ
ຕາຍ ແຕ່ຄວາມຕາຍຊິໜີຈາກເຂົາໄປ
9:7 ແລ້ວໂຕຕັກແຕນນັ້ນ ມີຮູບຮ່າງຄືກັນກັບມ້າກຽມພ້ອມທີ່ຊິອອກສຶກ ແລ້ວເທິງ
ຫົວຂອງມັນມີມົງກຸດເປັນລັກສະນະຄືທອງຄຳ ແລ້ວໜ້າຂອງມັນຄືໜ້າຄົນ

9:8 ແລ້ວຂົນຂອງມັນເປັນລັກສະນະຄືຜົມແມ່ຍິງ ແລ້ວແຂ້ວຂອງມັນເປັນລັກສະ-
ນະຄືແຂ້ວສິງໂຕ
9:9 ແລ້ວມັນມີເສື້ອເກາະຫັບເອິກ ເປັນລັກສະນະຄືເສື້ອເກາະເຫລັກ ແລ້ວສຽງປີກ
ມັນເປັນລັກສະນະຄືສຽງລົດມ້າຫລາຍຄັນແລ່ນເຂົ້າສະໜາມຮົບ
9:10 ແລ້ວຫາງຂອງມັນເປັນລັກສະນະຄືຫາງແມງປ່ອງທີ່ມີເຫລັກໃນ ແລ້ວມັນມີ
ອຳນາດໃຫ້ຄົນເຈັບປວດແຮງ ເປັນເວລາຕະຫລອດຫ້າເດືອນ
9:11 ແລ້ວມັນມີຫົວໜ້າປົກຄອງເໜືອມັນ ເປັນເທວະທູດຂອງເຫວເລິກອັນບໍ່ມີສຳ-
ເລັດນັ້ນ ເທວະທູດອົງນັ້ນມີຊື່ເປັນພາສາເຮັບເຣີວ່າ ອາບັດໂດນ ແຕ່ໃນພາສາ
ເກຣັກເອີ້ນວ່າ ອາໂປລີໂອນ *(ແປວ່າ ທຳລາຍ)*
9:12 ແນວຈິບຫາຍແນວທີ່ໜຶ່ງຜ່ານໄປແລ້ວ ແລ້ວນີ້ແຫລະ ຍັງມີແນວຈິບຫາຍອີກ
ສອງແນວທີ່ຊິເກີດຂຶ້ນໃນພາຍໜ້າ
9:13 ແລ້ວບັດເທວະທູດອົງທີ່ຫົກນັ້ນໄດ້ເປົ່າແກຂຶ້ນມາ ຜູ້ຂ້າໄດ້ຍິນສຽງເວົ້າອອກ
ມາທັງສີ່ແຈຂອງແທ່ນບູຊາ ທອງຄຳ ຢູ່ຕໍ່ໜ້າພຣະເຈົ້າ
9:14 ບອກເທວະທູດອົງທີ່ຫົກທີ່ຖືແກນັ້ນ ສັ່ງວ່າ “ໃຫ້ປ່ອຍເທວະທູດທັງສີ່ອົງນັ້ນ
ອອກ ທີ່ຖືກຂັງໄວ້ທີ່ແມ່ນໍ້າ ຢູຟາເຕ ອັນໃຫຍ່ຫລວງນັ້ນເດີ້”
9:15 ແລ້ວເທວະທູດທັງສີ່ນັ້ນໄດ້ຖືກປ່ອຍອອກໄປ ຊຶ່ງມັນໄດ້ຖືກກຽມໄວ້ມາແລ້ວ
ສຳລັບ ມື້ ເດືອນ ປີ ນັ້ນ ຄືຍາມທີ່ຊິໃຫ້ຂ້າຜູ້ຄົນຈຳນວນໜຶ່ງໃນສາມຂອງມະນຸດ
9:16 ແລ້ວຈຳນວນທະຫານມ້າທີ່ຜູ້ຂ້າໄດ້ຍິນມາຄື ສອງຮ້ອຍລ້ານຄົນ
9:17 ແລ້ວຝ່າຍກຸ່ມມ້ານັ້ນ ຜູ້ຂ້າໄດ້ເຫັນໃນນິມິດ ແລ້ວຝ່າຍຜູ້ທີ່ນັ່ງເທິງຫລັງມ້າກໍ
ສວມເສື້ອເກາະ ເປັນລັກສະນະສີແດງຄືໄຟ ສີຟ້າຄືດອກໄມ້ ກັບສີເຫລືອງຄືກຳ-
ມະຖັນ ແລ້ວຫົວຂອງມ້ານັ້ນມີລັກສະນະຄືຫົວຂອງສິງໂຕ ແລ້ວກໍມີໄຟກັບຄວັນ
ກັບກຳມະຖັນພຸ່ງອອກຈາກປາກຂອງມັນ
9:18 ແລ້ວດ້ວຍໄພພິບັດສາມແນວໝູ່ນີ້ຜູ້ຄົນຈຳນວນໜຶ່ງໃນສາມສ່ວນໄດ້ຖືກຂ້າ
ຄືດ້ວຍ ໄຟ ກັບຄວັນ ກັບກຳມະຖັນ ທີ່ພຸ່ງອອກມາຈາກປາກຂອງມ້ານັ້ນ
9:19 ຍ້ອນວ່າລິດເດດຂອງມ້ານັ້ນໄດ້ຢູ່ທີ່ປາກກັບຫາງ ແລ້ວຫາງຂອງມັນນັ້ນມີ
ລັກສະນະຄືຫາງງູທີ່ມີຫົວ ແລ້ວມັນເຮັດຮ້າຍຄົນດ້ວຍສອງແນວນັ້ນ

9:20 ແລ້ວຝ່າຍມະນຸດທັງຫລາຍທີ່ຍັງເຫລືອຢູ່ນັ້ນ ຄືຜູ້ທີ່ບໍ່ໄດ້ຕາຍດ້ວຍໄພພິບັດ
ນັ້ນ ເຂົາຍັງບໍ່ຍອມກັບໃຈຈາກການງານຂອງມືເຂົາ ຄືບໍ່ຍອມເລີກໄຫວ້ພວກຜີ
ພະຍາມານ ກັບບໍ່ຍອມເລີກໄຫວ້ຮູບເຄົາລົບບູຊາ ບໍ່ວ່າຊິເປັນທອງຄໍາ ເງິນ
ທອງເຫລືອງ ຫີນ ຫລືໄມ້ ຊຶ່ງຮູບເຄົາລົບນັ້ນບໍ່ສາມາດເບິ່ງເຫັນໄດ້ ຫລືຟັງ ຫລື
ຍ່າງໄດ້ຊໍ້າ
9:21 ກັບວ່າ ເຂົາບໍ່ຍອມກັບໃຈໃໝ່ຈາກການການຕາຍກໍາ ຫລືການເວດມົນຄາຖາ
ຫລືການຫລິ້ນຊູ້ ຫລືການລັກເອົາຂອງພວກເຂົາ

## ພຣະນິມິດ ບົດທີ 10

10:1 ແລ້ວຜູ້ຂ້າໄດ້ເຫັນເທວະທູດອີກອົງໜຶ່ງທີ່ມີລິດອໍານາດອັນໃຫຍ່ຍິ່ງ ລົງມາ
ຈາກສະຫວັນ ມີເມກຄຸມໄວ້ ກັບມີຮຸ້ງກິນນໍ້າຢູ່ເທິງຫົວ ກັບໜ້າມີລັກສະນະຄືພໍຄື
ດວງຕະເວັນ ກັບຕີນມີລັກສະນະຄືເສົາໄຟ
10:2 ແລ້ວເທວະທູດອົງນັ້ນຖືໜັງສືນ້ອຍມ້ວນໜຶ່ງກາງໄວ້ຢູ່ໃນມື ແລ້ວໄດ້ຢືນເອົາ
ຕີນຂວາຢຽບ ເທິງທະເລ ກັບຕີນຊ້າຍຢຽບເທິງແຜ່ນດິນໂລກ
10:3 ແລ້ວອົງນັ້ນໄດ້ຮ້ອງອອກສຽງດັ່ງມີລັກສະນະຄືສຽງສິງໂຕຄໍາ ຣາມ ພໍບັດ
ຮ້ອງອອກ ມີສຽງຟ້າຮ້ອງດັງຂຶ້ນມາເຈັດສຽງ
10:4 ບັດນີ້ ຕອນສຽງຟ້າຮ້ອງທັງເຈັດສຽງນັ້ນດັງຂຶ້ນມາແລ້ວ ຜູ້ຂ້າພວມຊິລົງມືຂຽນ
ແຕ່ໄດ້ຍິນສຽງຂອງຜູ້ມີອໍານາດເວົ້າລົງມາຈາກສະຫວັນ ບອກກັບຜູ້ຂ້າວ່າ *“ໃຫ້
ປະທັບຕາປິດໄວ້ເດີ້ ແນວນັ້ນທີ່ຟ້າຮ້ອງທັງເຈັດສຽງໄດ້ເວົ້າ ຢ່າຂຽນລົງເລີຍ”*
10:5 ແລ້ວເທວະທູດອົງທີ່ຜູ້ຂ້າເຫັນຢືນຢູ່ເທິງທະເລກັບແຜ່ນດິນໂລກນັ້ນ ລາວ ໄດ້
ເດ່ມືຂຶ້ນຕໍ່ຟ້າສະຫວັນ
10:6 ແລ້ວ ລາວ ຈົ່ງສາບານໃນພຣະນາມຂອງເພິ່ນຜູ້ດໍາລົງຢູ່ຕະຫລອດການເປັນ
ນິດ (ແມ່ນຜູ້ທີ່ສ້າງຟ້າສະຫວັນ ແຜ່ນດິນໂລກ ພ້ອມທັງທະເລ ກັບໝົດຄູ່ອັນຄູ່
ແນວຢູ່ໃນນັ້ນ) ວ່າ ຊິບໍ່ມີການຄອງຖ້າຕໍ່ໄປອີກແລ້ວ
10:7 ຄືໃນຍາມທີ່ເທວະທູດອົງທີ່ເຈັດໄດ້ເປົ່າແກນັ້ນ ບັດເລີ່ມຊິເປົ່າແລ້ວ ພໍດີຍາມ
ເວລາທີ່ເລື່ອງອັນເລິກລັບຂອງພຣະເຈົ້າທີ່ຖືກປິດຊ່ອນໄວ້ແຕ່ໂດນກໍຊິຈົບລົງ

ແລ້ວ ຕາມທີ່ເພິ່ນໄດ້ບອກໃຫ້ພວກຜູ້ຮັບໃຊ້ຂອງເພິ່ນ ຄືຜູ້ເປັນປາກເປັນສຽງ
ຂອງເພິ່ນນັ້ນ
10:8 ແລ້ວສຽງຂອງຜູ້ມີອຳນາດທີ່ຜູ້ຂ້າໄດ້ຍິນຈາກສະຫວັນນັ້ນ ໄດ້ເວົ້າກັບຜູ້ຂ້າ
ອີກເທື່ອໜຶ່ງວ່າ "ໃຫ້ໄປຮັບເອົາໜັງສືມ້ວນນ້ອຍນັ້ນເດີ້ ທີ່ຖືກກາງໄວ້ໃນມືຂອງ
ເທວະທູດອົງທີ່ຢືນຢູ່ທັງເທິງນ້ຳທະເລກັບເທິງບົກນັ້ນ"
10:9 ຜູ້ຂ້າຈັ່ງໄປຫາເທວະທູດອົງນັ້ນແລ້ວເວົ້າວ່າ "ຜູ້ຂ້າຂໍໜັງສືມ້ວນນ້ອຍນັ້ນແໜ່
ເດີ້" ເທວະທູດອົງນັ້ນຈັ່ງຕອບຜູ້ຂ້າວ່າ "ເອົາເລີຍ ແລ້ວໃຫ້ກິນມັນເດີ້ ມັນຊິເຮັດ
ໃຫ້ທ້ອງເຈົ້າຂົມ ແຕ່ມັນກໍຊິມີລົດຊາດຫວານຄືນ້ຳເຜີ້ງຕອນຢູ່ໃນປາກເຈົ້າ"
10:10 ແລ້ວຜູ້ຂ້າຈັ່ງຮັບເອົາໜັງສືມ້ວນນ້ອຍນັ້ນຈາກມືເທວະທູດ ແລ້ວໄດ້ກິນລົງ
ບັດມັນຢູ່ໃນປາກຜູ້ຂ້າ ມັນກໍຫວານຄືນ້ຳເຜີ້ງ ແຕ່ບັດພໍຜູ້ຂ້າກືນລົງໄປແລ້ວທ້ອງ
ຜູ້ຂ້າກໍຮູ້ສຶກຂົມ
10:11 ແລ້ວເທວະທູດອົງນັ້ນຈັ່ງບອກຜູ້ຂ້າວ່າ "ເຈົ້າຕ້ອງພະຍາກອນອີກ ຕໍ່ໜ້າ
ຫລາຍເຜົ່າພັນ ຫລາຍຊົນຊາດ ຫລາຍພາສາ ກັບຕໍ່ກະສັດຫລາຍອົງ"

## ພຣະນິມິດ ບົດທີ 11

11:1 ແລ້ວຜູ້ຂ້າໄດ້ຮັບໄມ້ອໍ້ທ່ອນໜຶ່ງເປັນລັກສະນະຄືໄມ້ແມັດ ແລ້ວເທວະທູດອົງ
ນັ້ນຢືນຢູ່ບອກວ່າ "ໃຫ້ລຸກຂຶ້ນເດີ້ ໄປແທກເອົາພຣະວິຫານຂອງພຣະເຈົ້າເດີ້ ກັບ
ແທ່ນບູຊາ ພ້ອມທັງຈຳນວນຄົນທັງຫລາຍທີ່ເຄົາລົບບູຊາພຣະເຈົ້າຢູ່ໃນຫັ້ນ
11:2 ແຕ່ບໍ່ໃຫ້ແທກລານຢູ່ທາງນອກເດີ້ ຍ້ອນວ່າໜ້ອງນັ້ນໄດ້ມອບໄວ້ໃຫ້ຄົນຕ່າງ-
ຊາດ ແລ້ວເມືອງສັກສິດບໍລິສຸດຊິໂດນພວກເຂົາຢຽບໄປມາ ເປັນເວລາສີ່ສິບສອງ
ເດືອນ
11:3 ແລ້ວເຮົາຊິມອບລິດອຳນາດໃຫ້ພະຍານທັງສອງຂອງເຮົາ ແລ້ວເຂົາຊິນຸ່ງ
ຜ້າກະສອບ ກັບຊິເວົ້າຄຳພະຍາກອນຕະຫລອດເປັນເວລາໜຶ່ງພັນສອງຮ້ອຍ
ຫົກສິບມື້"
11:4 ພະຍານທັງສອງນີ້ປຽບຄືກົກໝາກກອກເທດສອງກົກ ກັບໂຄມໄຟສອງຄັນທີ່
ຕັ້ງຢູ່ຕໍ່ໜ້າພຣະເຈົ້າ ຜູ້ເພິ່ນເປັນເຈົ້າຂອງແຜ່ນດິນໂລກ

11:5 ແລ້ວຄັ່ນຜູ້ໃດຄິດຢາກຊິເຮັດໃສ່ພະຍານທັງສອງນັ້ນ ໄຟກໍຊິພຸ່ງອອກຈາກ
ປາກຂອງເຂົາ ເຜົາໄໝ້ສັດຕູຜູ້ຕໍ່ຕ້ານນັ້ນ ຄືຄັ່ນຜູ້ໃດຊອກເຮັດຮ້າຍເຂົາ ຜູ້ນັ້ນກໍຊິ
ຕ້ອງຕາຍຈັ່ງຊັ້ນ
11:6 ແລ້ວຜູ້ພະຍານທັງສອງນີ້ມີລິດອຳນາດທີ່ຊິປິດທ້ອງຟ້າໄວ້ກໍໄດ້ ເພື່ອບໍ່ໃຫ້ຝົນ
ຕົກຢູ່ໃນຍາມເວລາທີ່ເຂົາພວມເປັນພະຍາກອນນັ້ນ ກັບມີລິດອຳນາດເໜືອນ້ຳ
ສາມາດເຮັດໃຫ້ນ້ຳກາຍເປັນເລືອດກໍໄດ້ ກັບສາມາດທີ່ຊິຟາດໂລກດ້ວຍໂລກ-
ໄພໄຂ້ເຈັບອັນຮ້າຍແຮງຕ່າງໆ ຍາມໃດກໍໄດ້ຕາມໃຈມັກຂອງເຂົາ
11:7 ແລ້ວບັດເຂົາຈົບການເປັນພະຍານແລ້ວ ສັດເດລະສານທີ່ຂຶ້ນມາຈາກເຫວ
ເລິກອັນບໍ່ມີສຳເລັດນັ້ນ ແລ້ວຊິເຮັດສຶກສົງຄາມ ຕໍ່ສູ້ກັບເຂົາ ແລ້ວຊິເອົາຊະນະ
ກັບຊິຂ້າເຂົາເລີຍ
11:8 ແລ້ວສົບຂອງເຂົາຊິວາງໄວ້ຢູ່ເທິງຖະໜົນໃນເມືອງໃຫຍ່ຫລວງນັ້ນ ຊຶ່ງຕາມ
ພາສາພາບພົດຝ່າຍວິນຍານເອີ້ນກັນວ່າ ເມືອງ ໂສໂດມ ກັບ ເອຢິບ ເປັນໜ້ອງທີ່
ອົງພຣະຜູ້ເປັນເຈົ້າຂອງເຮົາຖືກຄຶງນຳ
11:9 ແລ້ວມີຄົນຫລວງຫລາຍ ຈາກຫລາຍຊົນຊາດ ຫລາຍເຜົ່າພັນ ຫລາຍພາສາ
ກັບຫລາຍປະເທດ ຊິຈ້ອງເບິ່ງສົບຂອງເຂົາທັງສອງຕະຫລອດເປັນເວລາສາມມື້
ເຄິ່ງ ກັບພວກເຂົາຊິບໍ່ຍອມໃຫ້ເອົາສົບຂອງຜູ້ພະຍານນັ້ນອອກໄປມ້ຽນໄວ້ໃນ
ອຸບໂມງເລີຍ
11:10 ແລ້ວຄົນຫລວງຫລາຍທີ່ຢູ່ເທິງແຜ່ນດິນໂລກຊິຍິນດີຫລາຍ ຍ້ອນວ່າຜູ້ພະ-
ຍານນັ້ນຕາຍແລ້ວ ກັບຊິສະໜຸກສະໜານກັນໃຫຍ່ ແລກເອົາຂອງຂວັນຕໍ່ກັນ
ຍ້ອນວ່າຜູ້ພະຍາກອນທັງສອງນີ້ເຄີຍທໍລະມານເຂົາຜູ້ທີ່ອາໄສຢູ່ເທິງແຜ່ນດິນ-
ໂລກ
11:11 ບັດສາມມື້ເຄິ່ງຜ່ານໄປແລ້ວ ລົມຫາຍໃຈສິ້ນສຸດຊີວິດຈາກພຣະເຈົ້າໄດ້ເຂົ້າ
ສົບຂອງເຂົາທັງສອງ ແລ້ວເຂົາຈັ່ງລຸກຂຶ້ນຢືນຢູ່ຄືເກົ່າ ແລ້ວຄົນທັງຫລາຍທີ່ໄດ້
ເຫັນເຂົາກໍຕົກໃຈຢ້ານຢ່າງໃຫຍ່

11:12 ແລ້ວຜູ້ພະຍານທັງສອງນັ້ນໄດ້ຍິນສຽງຂອງຜູ້ມີອຳນາດລົງມາຈາກສະຫວັນ
ເວົ້າກັບເຂົາວ່າ *“ໃຫ້ຂຶ້ນມາທາງນີ້ເດີ້”* ເຂົາທັງສອງຈັ່ງລອຍຂຶ້ນໄປສະຫວັນໃນ
ໝູ່ເມກ ແລ້ວພວກສັດຕູນັ້ນໄດ້ເຫັນເຂົາ
11:13 ແລ້ວໃນຍາມດຽວກັນນັ້ນ ໄດ້ເກີດແຜ່ນດິນໄຫວຢ່າງຮ້າຍແຮງ ແລ້ວໜຶ່ງໃນ
ສິບສ່ວນຂອງເມືອງນັ້ນກໍພັງລົງລົງເລີຍ ມີຄົນຕາຍຍ້ອນແຜ່ນດິນໄຫວນັ້ນເຈັດ
ພັນຄົນ ກັບຄົນທີ່ເຫລືອຢູ່ກໍເກີດຢ້ານຢ່າງໃຫຍ່ ຈັ່ງໄດ້ຖວາຍພຣະກຽດຕໍ່ພຣະ-
ເຈົ້າຜູ້ຢູ່ສະຫວັນ
11:14 ເຫດການຈິບຫາຍອັນທີ່ສອງກໍໄດ້ຜ່ານພົ້ນໄປແລ້ວ ນີ້ແຫລະ ເຫດການຈິບ-
ຫາຍອັນທີ່ສາມກໍຊິມາຮອດໃນໄວໆ ນີ້ເນາະ
11:15 ແລ້ວເທວະທູດອົງທີ່ເຈັດນັ້ນກໍໄດ້ເປົ່າແກຂຶ້ນມາ ແລ້ວໄດ້ມີສຽງດັ່ງຫລາຍ
ສຽງໃນສະຫວັນ ເວົ້າວ່າ “ລາຊະອານາຈັກທັງຫລາຍໃນໂລກນີ້ໄດ້ກັບເປັນລາ-
ຊະອານາຈັກຂອງອົງພຣະຜູ້ເປັນເຈົ້າຂອງເຮົາແລ້ວ ກັບເປັນຂອງ *ພຣະຄຣິດ*
ຂອງເພິ່ນນຳ ແລ້ວເພິ່ນກໍຊິຄອບຄອງຕະຫລອດການເປັນນິດ”
11:16 ແລ້ວຜູ້ຫລັກຜູ້ໃຫຍ່ຊາວສີ່ຄົນນັ້ນ ຜູ້ຊຶ່ງນັ່ງໃນຕຳແໜ່ງຂອງເຂົາຢູ່ຕໍ່ໜ້າ
ພຣະເຈົ້າ ໄດ້ໝອບຂາບລົງຖວາຍນະມັດສະການພຣະເຈົ້າຢູ່ຫັ້ນ
11:17 ເວົ້າກັນວ່າ “ໂອ ຂ້າແຕ່ອົງພຣະຜູ້ເປັນເຈົ້າເອີຍ ຜູ້ເພິ່ນປະກອບດ້ວຍລິດທາ-
ນຸພາບສູງສຸດ ຜູ້ເພິ່ນດຳລົງຢູ່ໃນບັດນີ້ ກັບດຳລົງຢູ່ໃນກາລະກ່ອນ ກັບຊິດຳລົງຢູ່-
ໃນອະນາຄົດນຳ ພວກຜູ້ຂ້າຂໍຂອບຄຸນພຣະອົງ ທີ່ໄດ້ດຳລົງຢູ່ໃນລິດທານຸພາບ
ອັນໃຫຍ່ຍິ່ງຂອງພຣະອົງ ກັບໄດ້ຄອບຄອງຢູ່
11:18 ໝູ່ຊົນຊາດໄດ້ເກີດຢາກຮ້າຍ ແຕ່ຄວາມໂມໂຫຂອງພຣະອົງໄດ້ມາແລ້ວ ຄື
ເປັນຍາມທີ່ຄົນຕາຍທັງຫລາຍຊິຕ້ອງຖືກພຣະອົງພິພາກສາ ກັບເຖິງຍາມທີ່ພຣະ-
ອົງຊິມອບບຳເໜັດໃຫ້ຜູ້ຮັບໃຊ້ຂອງພຣະອົງ ຄືພວກຜູ້ເປັນປາກເປັນສຽງຂອງ
ພຣະອົງ ກັບຄົນບໍລິສຸດຂອງພຣະອົງ ພ້ອມກັບຄົນທັງຫລາຍທີ່ເຄົາລົບພຣະນາມ
ຂອງພຣະອົງ ທັງຜູ້ໃຫຍ່ກັບຜູ້ນ້ອຍ ແລ້ວພຣະອົງຊິທຳລາຍຜູ້ຄົນທີ່ທຳລາຍ
ແຜ່ນດິນໂລກນຳ”

11:19 ແລ້ວພຣະວິຫານຂອງພຣະເຈົ້າໃນສະຫວັນກໍເປີດອອກ ແລ້ວໃນພຣະວິ-
ຫານນັ້ນເຫັນມີຫີບພັນທະສັນຍາຂອງເພິ່ນ ແລ້ວກໍມີຟ້າແມບ ກັບສຽງເວົ້າຕ່າງໆ
ກັບສຽງຟ້າຮ້ອງ ແລ້ວມີແຜ່ນດິນໄຫວ ກັບມີໝາກເຫັບຕົກລົງມາຢ່າງຮ້າຍແຮງ

## ພຣະນິມິດ ບົດທີ 12

12:1 ແລ້ວບັດນີ້ ມີການມະຫັດສະຈັນອັນໃຫຍ່ຫລວງປາກົດຂຶ້ນມາໃນສະຫວັນ ຄື
ມີແມ່ຍິງຄົນໜຶ່ງທີ່ນຸ່ງດວງຕະເວັນເປັນເຄື່ອງແຕ່ງໂຕ ແລ້ວດວງເດືອນກໍຢູ່ທາງ
ໃຕ້ຕີນຂອງເຂົາ ກັບເຂົາໃສ່ດວງດາວສິບສອງດວງເປັນມົງກຸດ
12:2 ແລ້ວແມ່ຍິງນັ້ນພວມຕັ້ງທ້ອງຢູ່ ຈັ່ງຮ້ອງໄຫ້ຍ້ອນເຈັບທ້ອງໃກ້ຊິອອກລູກ
12:3 ແລ້ວມີມະຫັດສະຈັນອີກແນວໜຶ່ງໄດ້ປາກົດຂຶ້ນໃນສະຫວັນ ແລ້ວນີ້ແຫລະ ມີ
ພະຍານາກໃຫຍ່ສີແດງ ໂຕໜຶ່ງ ແລ້ວພະຍານາກໂຕນັ້ນມີຫົວເຈັດຫົວກັບມີເຂົາ
ສິບເຂົາ ກັບຫົວຂອງມັນມີມົງກຸດຢູ່ເຈັດອັນ
12:4 ແລ້ວຫາງຂອງມັນໄດ້ກວາດເອົາດວງດາວໃນທ້ອງຟ້າໜຶ່ງໃນສາມສ່ວນຖິ້ມ
ລົງມາເທິງແຜ່ນດິນໂລກ ແລ້ວພະຍານາກນັ້ນຢືນຢູ່ຕໍ່ໜ້າແມ່ຍິງຜູ້ທີ່ພວມຊິອອກ
ລູກ ເພື່ອຊິກືນກິນລູກເຂົາບັດອອກມາ
12:5 ແລ້ວຍິງນັ້ນໄດ້ລູກເປັນຜູ້ຊາຍ ຊຶ່ງຜູ້ນັ້ນຊິຄອບຄອງປະຊາຊາດທັງປວງໃນ
ໂລກດ້ວຍຄະທາເຫລັກ ກັບລູກຊາຍນັ້ນຖືກຮັບຂຶ້ນໄປຢູ່ກັບພຣະເຈົ້າ ກັບພຣະ-
ທີ່ນັ່ງຂອງເພິ່ນ
12:6 ແລ້ວຍິງນັ້ນກໍເລີຍໜີເຂົ້າໄປໃນຖິ່ນແຫ້ງແລ້ງໜ້ອງບໍ່ມີຄົນຢູ່ ຄືເປັນໜ້ອງທີ່
ພຣະເຈົ້າໄດ້ຈັດກຽມໄວ້ໃຫ້ນາງ ເພື່ອເຂົາຊິໄດ້ລ້ຽງເບິ່ງນາງຢູ່ຫັ້ນ ເປັນເວລາໜຶ່ງ
ພັນສອງຮ້ອຍຫົກສິບມື້
12:7 ແລ້ວໄດ້ມີສຶກສົງຄາມເກີດຂຶ້ນໃນສະຫວັນ ເທວະທູດ ມີກາເອນ ກັບພວກເທ-
ວະທະຫານຂອງທ່ານໄດ້ຕໍ່ສູ້ກັບພະຍານາກນັ້ນ ແລ້ວພະຍານາກກັບພວກລູກ
ນ້ອງຂອງມັນກໍຕໍ່ສູ້
12:8 ແຕ່ຝ່າຍພະຍານາກນັ້ນກໍເປັນຝ່າຍພ່າຍແພ້ ຈັ່ງບໍ່ມີໜ້ອງຢູ່ໃນສະຫວັນໃຫ້
ພວກມັນອີກຕໍ່ໄປເລີຍ

12:9 ແລ້ວພະຍານາກໃຫຍ່ນັ້ນຊຶ່ງເປັນງູດຶກດຳບັນ ທີ່ເຂົາເອີ້ນກັນວ່າ ພະຍາມານ
ກັບຊາຕານ ຜູ້ລໍ້ລວງຄົນທັງໂລກ ແລ້ວພະຍານາກພ້ອມກັບພວກເທວະທູດຂອງ
ມັນກໍຖືກຂັບໄລ່ຖິ້ມລົງມາໃນແຜ່ນດິນໂລກ
12:10 ແລ້ວຜູ້ຂ້າໄດ້ຍິນສຽງດັ່ງເວົ້າຂຶ້ນໃນສະຫວັນວ່າ “ບັດນີ້ຄວາມລອດພົ້ນ ກັບ
ລິດກຳລັງ ກັບລາຊະອານາຈັກຂອງພຣະເຈົ້າຂອງເຮົາ ກັບອຳນາດ ພຣະຄຣິດ
ຂອງເພິ່ນ ໄດ້ມາຮອດມາເຖິງແລ້ວ ຍ້ອນວ່າຜູ້ທີ່ກ່າວຫາພວກພີ່ນ້ອງຂອງເຮົາ ຊຶ່ງ
ໄດ້ກ່າວຫາເຂົາຕໍ່ໜ້າພຣະເຈົ້າຂອງເຮົາ ທັງກາງເວັນກັບກາງຄືນ ກໍໄດ້ຖືກຂັບໄລ່
ອອກໄປແລ້ວ
12:11 ແລ້ວເຂົາທັງຫລາຍມີໄຊຕໍ່ ພະຍາມານ ໄດ້ດ້ວຍພຣະໂລຫິດຂອງແກະນ້ອຍ
ຂອງພຣະເຈົ້າ ກັບດ້ວຍຄຳພະຍານຂອງພວກເຂົາເອງ ກັບວ່າພວກເຂົາບໍ່ໄດ້
ຮັກແພງຊີວິດຂອງໂຕເອງເຖິງຍອມຕາຍ
12:12 ຈັ່ງຊັ້ນ ໂອ ສະຫວັນກັບຜູ້ຄົນທີ່ຢູ່ໃນຫັ້ນເອີຍ ໃຫ້ມ່ວນຊື່ນຍິນດີເດີ້ ແຕ່ມີ
ການຈິບຫາຍຕໍ່ຜູ້ທີ່ຢູ່ໃນແຜ່ນດິນໂລກ ກັບທະເລ ຍ້ອນວ່າ ພະຍາມານ ໄດ້ລົງມາ
ຢູ່ນຳພວກເຈົ້າແລ້ວ ດ້ວຍຄວາມໂມໂຫຢ່າງໃຫຍ່ ຍ້ອນມັນຮູ້ວ່າຍາມຂອງມັນ
ເຫລືອແຕ່ນ້ອຍ”
12:13 ບັດນີ້ ຕອນພະຍານາກນັ້ນເຫັນວ່າມັນຖືກຂັບໄລ່ຖິ້ມລົງມາໃນແຜ່ນດິນໂລກ
ແລ້ວ ມັນກໍຂົ່ມເຫງຍິງທີ່ ອອກລູກຊາຍນັ້ນ
12:14 ແຕ່ຍິງນັ້ນໄດ້ຮັບປີກນົກອິນທີໃຫຍ່ສອງປີກ ເພື່ອນາງຊິໄດ້ບິນໜີຈາກໂຕ
ພະຍານາກນັ້ນ ເຂົ້າໄປໃນຖິ່ນແຫ້ງແລ້ງໃນໜ້ອງທີ່ນາງໄດ້ຮັບການລ້ຽງເບິ່ງ ເປັນ
ໜຶ່ງເວລາ ກັບສອງເວລາ ກັບເຄິ່ງເວລາ
12:15 ຝ່າຍພະຍານາກ ໄດ້ພົ່ນນໍ້າອອກຈາກປາກຂອງມັນ ຄືນໍ້າທ່ວມ ໃຫ້ໄຫລ
ຕາມຍິງນັ້ນ ເພື່ອຊິໃຫ້ພັດຍິງໄຫລໄປກັບນໍ້າທ່ວມນັ້ນ
12:16 ແຕ່ແຜ່ນດິນກໍໄດ້ຊ່ອຍຍິງນັ້ນໄວ້ ໂດຍໄດ້ແຫວກອອກໄປເປັນຊ່ອງ ຈັ່ງດູດ
ນໍ້າທ່ວມທີ່ພົ່ນອອກຈາກປາກພະຍານາກ ລົງໄປຕາມຊ່ອງນັ້ນ

12:17 ຝ່າຍພະຍານາກມັນກໍແຄ້ນເຄືອງຍິ່ງນັ້ນ ຈັ່ງອອກໄປເຮັດສົງຄາມ ຕໍ່ສູ້
ກັບເຊື້ອສາຍຂອງນາງ ຜູ້ທີ່ຍັງຢູ່ ຜູ້ທີ່ຮັກສາຄຳສັ່ງຂອງພຣະເຈົ້າ ກັບມີຄຳພະ-
ຍານເຖິງ ພຣະເຢຊູຄຣິດ

## ພຣະນິມິດ ບົດທີ 13

13:1 ແລ້ວຜູ້ຂ້າຢືນຢູ່ຫາດຊາຍທະເລ ແລ້ວໄດ້ເຫັນສັດເດລະສານໂຕໜຶ່ງຂຶ້ນມາ
ຈາກທະເລ ຊຶ່ງມີເຈັດຫົວກັບສິບເຂົາ ແລ້ວເຂົາທັງສິບນັ້ນມີມົງກຸດສິບອັນ ກັບມີຊື່
ທີ່ເປັນຄຳໝິ່ນປະມາດຈາລຶກໄວ້ທີ່ຫົວທັງເຈັດຂອງມັນ
13:2 ແລ້ວຝ່າຍສັດເດລະສານທີ່ຜູ້ຂ້າໄດ້ເຫັນນັ້ນ ມີລັກສະນະຄືເສືອດາວ ມີຕີນຄື
ຕີນໝີ ມີປາກຄືປາກສິງໂຕ ແລ້ວພະຍານາກໄດ້ມອບລິດກຳລັງຂອງມັນໃຫ້ສັດ
ເດລະສານນັ້ນ ກັບບັນລັງ ພ້ອມກັບມະຫາອຳນາດໃຫ້ມັນນຳ
13:3 ແລ້ວຜູ້ຂ້າໄດ້ສັງເກດເຫັນວ່າຫົວໜຶ່ງຂອງສັດເດລະສານເບິ່ງຄືຖືກແຂ້ວເຖິງ
ຕາຍ ແຕ່ແຜນັ້ນໄດ້ເຊົາດີແລ້ວ ຄົນທັງໂລກກໍເລີຍເປັນຕາງຶດສັດເດລະສານນັ້ນ
13:4 ແລ້ວເຂົາທັງຫລາຍຈັ່ງໄຫວ້ບູຊາພະຍານາກທີ່ໄດ້ມອບອຳນາດໃຫ້ສັດເດລະ-
ສານນັ້ນ ພ້ອມກັບໄຫວ້ບູຊາສັດເດລະສານນັ້ນນຳ ບອກວ່າ *"ໃຜຊິປຽບຄືສັດເດ-
ລະສານນີ້ ກັບໃຜຊິສາມາດເຮັດສົງຄາມ ຕໍ່ສູ້ກັບສັດເດລະສານນີ້ໄດ້"*
13:5 ແລ້ວພະຍານາກໄດ້ມອບໃຫ້ສັດເດລະສານນັ້ນ ມີປາກເວົ້າໂອ້ອວດໃຫຍ່ໂຕ
ກັບມີຄຳລົບຫລູ່ໝິ່ນປະມາດຕ່າງໆ ແລ້ວມັນໄດ້ຮັບອຳນາດເຮັດຈັ່ງຊັ້ນຕະຫລອດ
ເປັນເວລາສີ່ສິບສອງເດືອນ
13:6 ແລ້ວມັນໄດ້ເວົ້າຄຳໝິ່ນປະມາດໃສ່ພຣະເຈົ້າ ລົບຫລູ່ພຣະນາມຂອງເພິ່ນ ກັບ
ວິຫານຂອງເພິ່ນ ພ້ອມກັບຜູ້ຄົນທັງຫລາຍທີ່ຢູ່ໃນສະຫວັນນຳ
13:7 ກັບມັນໄດ້ຮັບມອບອຳນາດທີ່ຊິເຮັດສົງຄາມ ຕໍ່ສູ້ກັບຄົນຂອງພຣະເຈົ້າ ກັບ
ໃຫ້ເອົາຊະນະພວກເຂົາ ກັບໄດ້ຮັບມອບອຳນາດເໜືອຄູ່ຄົນ ຄືຄູ່ເຜົ່າພັນ ຄູ່ພາ-
ສາ ກັບຄູ່ຊົນຊາດ
13:8 ແລ້ວຄົນຫລວງຫລາຍທີ່ຢູ່ໃນແຜ່ນດິນໂລກຊິໄຫວ້ບູຊາສັດເດລະສານນັ້ນ ຄື
ຄູ່ຄົນທີ່ບໍ່ມີຊື່ຈົດໄວ້ໃນໜັງສືແຫ່ງຊີວິດຂອງແກະນ້ອຍຂອງພຣະເຈົ້າ ຜູ້ເພິ່ນທີ່ຖືກ
ຂ້າກ່ອນຊິສ້າງໂລກ

13:9 ໃຜມີຫູກໍໃຫ້ຟັງເອົາ ໂລດ ເດີ້
13:10 ຜູ້ໃດທີ່ນຳຄົນເຂົ້າໄປເປັນຊະເລີຍ ຜູ້ນັ້ນກໍຊິຕ້ອງຕົກເປັນຊະເລີຍຄືກັນ ກັບ
ຜູ້ໃດທີ່ຂ້າເຂົາດ້ວຍດາບ ຜູ້ນັ້ນກໍຊິຕ້ອງຖືກຂ້າດ້ວຍດາບຄືກັນ  ໃນນີ້ເນາະ ເປັນ
ຄວາມອົດທົນກັບຄວາມເຊື່ອຂອງພວກຄົນຂອງພຣະເຈົ້າ
13:11 ແລ້ວຜູ້ຂ້າຫລຽວເບິ່ງ ໄດ້ເຫັນສັດເດລະສານອີກໂຕໜຶ່ງຂຶ້ນມາຈາກແຜ່ນດິນ
ໂຕນັ້ນມີສອງເຂົາຄືແກະນ້ອຍ ແລ້ວມີສຽງເວົ້າຄືພະຍານາກ
13:12 ແລ້ວສັດເດລະສານໂຕນີ້ມີອຳນາດຄືກັນກັບສັດເດລະສານໂຕເດີມນັ້ນຢ່າງ
ຄົບ ເລີຍສາມາດເຮັດໃຫ້ຄົນຫລວງຫລາຍທີ່ຢູ່ໃນໂລກນັ້ນໄຫວ້ບູຊາສັດເດລະ-
ສານໂຕເດີມ ຊຶ່ງເຄີຍມີແຜປາງຕາຍແຕ່ເຊົາແລ້ວ
13:13 ແລ້ວມັນສາມາດເຮັດແນວເປັນຕາງຶດຢ່າງໃຫຍ່ຫລາຍແນວ ຈັ່ງໄດ້ເຮັດໃຫ້
ໄຟຕົກລົງມາຈາກທ້ອງຟ້າໃສ່ແຜ່ນດິນໂລກຕໍ່ໜ້າຕໍ່ຕາຜູ້ຄົນທັງຫລາຍ
13:14 ແລ້ວມັນໄດ້ລໍ້ລວງຄົນທັງຫລາຍທີ່ຢູ່ໃນໂລກ ໂດຍແນວເປັນຕາງຶດໝູ່ນັ້ນ ຊຶ່ງ
ມັນໄດ້ຮັບມອບອຳນາດທີ່ຊິເຮັດຕໍ່ໜ້າຕໍ່ຕາສັດເດລະສານໂຕເດີມນັ້ນ ແລ້ວມັນ
ໄດ້ສັ່ງໃຫ້ຄົນທັງຫລາຍທີ່ອາໄສຢູ່ໃນແຜ່ນດິນໂລກ ໃຫ້ປັ້ນຮູບຂອງສັດເດລະ-
ສານໂຕເດີມນັ້ນ ທີ່ຖືກແຂ້ວດ້ວຍດາບແຕ່ຍັງມີຊີວິດຢູ່
13:15 ແລ້ວມັນໄດ້ຮັບມອບອຳນາດທີ່ຊິເຮັດໃຫ້ຮູບປັ້ນຂອງສັດເດລະສານໂຕເດີມ
ນັ້ນເກີດມີຊີວິດຢູ່  ເພື່ອໃຫ້ຮູບປັ້ນຂອງສັດເດລະສານສາມາດທັງເວົ້າໄດ້ ກັບທັງ
ຂ້າຜູ້ຄົນທີ່ບໍ່ຍອມໄຫວ້ບູຊາຮູບປັ້ນສັດເດລະສານນັ້ນ
13:16 ແລ້ວມັນຍັງສາມາດເຮັດໃຫ້ໝົດຄູ່ຄົນ ທັງຜູ້ໃຫຍ່ ກັບຜູ້ນ້ອຍ ຜູ້ຮັ່ງມີ ກັບຜູ້
ຍາກຈົນ ທັງຜູ້ເປັນ ໄທ  ກັບຜູ້ເປັນຂ້າທາດ ໃຫ້ຮັບເຄື່ອງໝາຍໄວ້ຢູ່ທີ່ມືຂວາຫລືຢູ່
ທີ່ໜ້າຜາກຂອງເຂົາ
13:17 ເພື່ອບໍ່ໃຫ້ຜູ້ໃດຄ້າຂາຍໄດ້ນອກຈາກຜູ້ທີ່ມີເຄື່ອງໝາຍນັ້ນ ຫລືຊື່ຂອງສັດເດ-
ລະສານນັ້ນ ຫລືໂຕເລກຂອງຊື່ມັນ
13:18 ໃນເລື່ອງນີ້ຄວນຊິໃຊ້ປັນຍາ ຂໍໃຫ້ຜູ້ໃດມີຄວາມເຂົ້າໃຈກໍຄຳນວນໂຕເລກ
ຂອງສັດເດລະສານນັ້ນ ຄືມັນເປັນເລກຂອງຄົນໆ ໜຶ່ງ  ໂຕເລກນັ້ນຄື 666

# ພຣະນິມິດ ບົດທີ 14

14:1 ແລ້ວຜູ້ຂ້າຫລຽວເບິ່ງ ແລ້ວນີ້ແຫລະ ໄດ້ເຫັນແກະນ້ອຍຂອງພຣະເຈົ້າໄດ້ຢືນ-
ຢູ່ເທິງພູເຂົາ ຊີໂອນ ແລ້ວຜູ້ທີ່ຢູ່ກັບເພິ່ນກໍມີ 144,000 ຄົນ ຊຶ່ງເປັນຜູ້ທີ່ມີພຣະ-
ນາມຂອງພຣະເຈົ້າຜູ້ເປັນພໍ່ຂອງເພິ່ນ ຂຽນໄວ້ເທິງໜ້າຜາກຂອງເຂົາທັງຫລາຍ
ນັ້ນ
14:2 ກັບຜູ້ຂ້າໄດ້ຍິນສຽງຈາກສະຫວັນຄືກັນກັບສຽງນໍ້າຫລາຍໆ ໄຫລແຮງ ຄືກັນ-
ກັບສຽງຟ້າຮ້ອງສະໜັ່ນ ກັບຜູ້ຂ້າໄດ້ຍິນສຽງພວກຄົນດີດພິນເຂົາຄູ່ພວມຫລິ້ນຢູ່
14:3 ຄົນພວກນັ້ນໄດ້ຮ້ອງເພງ ຄືເປັນເພງບົດໃໝ່ ຕໍ່ໜ້າພຣະທີ່ນັ່ງ ກັບຕໍ່ໜ້າສັດ
ທັງສີ່ນັ້ນ ກັບຕໍ່ໜ້າພວກຜູ້ຫລັກຜູ້ໃຫຍ່ ແລ້ວບໍ່ມີໃຜສາມາດຮຽນຮູ້ເພງບົດນັ້ນໄດ້
ນອກຈາກ 144,000 ຄົນນັ້ນ ທີ່ໄດ້ຮັບການໄຖ່ຖອນອອກຈາກແຜ່ນດິນໂລກໄວ້
ແລ້ວ
14:4 ຄົນພວກນີ້ເປັນຄົນທີ່ບໍ່ເຄີຍສົມສູ່ກັບແມ່ຍິງ ຍ້ອນວ່າເຂົາເປັນພວກພົມມະ-
ຈາລີ ແກະນ້ອຍຂອງພຣະເຈົ້າໄປໃສ ຄົນພວກນີ້ກໍຕາມໄປນຳ ພວກນີ້ແມ່ນພວກ
ທີ່ໄດ້ຮັບການໄຖ່ບາບແລ້ວຈາກມວນມະນຸດ ຊຶ່ງພວກເຂົາໄດ້ເປັນຜົນທຳອິດຕໍ່
ພຣະເຈົ້າກັບຕໍ່ແກະນ້ອຍຂອງເພິ່ນ
14:5 ກັບວ່າ ປາກຂອງເຂົາບໍ່ເຄີຍມີການເວົ້າຄຳອຸບາຍຫລອກລວງ ເຂົາຈັ່ງບໍ່ມີ
ຄວາມຜິດຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າເລີຍ
14:6 ແລ້ວຜູ້ຂ້າໄດ້ເຫັນເທວະທູດອີກອົງໜຶ່ງທີ່ບິນຢູ່ກາງທ້ອງຟ້າ ໄດ້ຖືຂ່າວປະ-
ເສີດທີ່ຢືນຍົງຕະຫລອດການເປັນນິດໄປນຳ ເພື່ອປະກາດຕໍ່ຜູ້ຄົນທັງຫລາຍທີ່ຢູ່-
ໃນໂລກ ຄືຄູ່ຊົນຊາດ ຄູ່ເຜົ່າພັນ ຄູ່ພາສາ ກັບຄູ່ຕະກູນ
14:7 ໄດ້ປະກາດດ້ວຍສຽງເວົ້າອັນດັງວ່າ "ໃຫ້ເຄົາລົບພຣະເຈົ້າ ຖວາຍສະຫງ່າ-
ລາສີຕໍ່ເພິ່ນເດີ້ ຍ້ອນວ່າ ຍາມພິພາກສາຄັ້ງໃຫຍ່ຫລວງຂອງເພິ່ນໄດ້ມາຮອດມາ
ເຖິງແລ້ວ ຈັ່ງໃຫ້ເຄົາລົບບູຊາເພິ່ນເດີ້ ຜູ້ເພິ່ນທີ່ໄດ້ສ້າງຟ້າສະຫວັນ ແຜ່ນດິນໂລກ
ທະເລ ພ້ອມທັງແຫລ່ງນໍ້າພຸທັງຫລາຍນຳ"

14:8 ແລ້ວມີເທວະທູດອີກອົງໜຶ່ງຕາມໄປປະກາດວ່າ “ *ບາບີໂລນ* ມະຫານະຄອນ
ນັ້ນໄດ້ລົ້ມແລ້ວ ລົ້ມແລ້ວ ແມ່ນຍ້ອນນາງເຮັດໃຫ້ປະຊາຊາດທັງປວງກິນເຫລົ້າ
ອະງຸ່ນແຫ່ງຄວາມໂກດກິ້ວຈາກການຫລິ້ນຊູ້ຂອງນາງນັ້ນ”
14:9 ກັບມີເທວະທູດຊຶ່ງເປັນອົງທີ່ສາມຕິດຕາມໄປ ປະກາດດ້ວຍສຽງເວົ້າອັນດັງ
ວ່າ “ຄັ້ນຜູ້ໃດໄຫວ້ບູຊາສັດເດລະສານກັບຮູບປັ້ນຂອງມັນນັ້ນ ກັບຮັບເຄື່ອງໝ
າຍຂອງມັນໄວ້ເທິງໜ້າຜາກຫລືໃນມືຂອງໂຕ
14:10 ຜູ້ນັ້ນກໍຊິຕ້ອງກິນເຫລົ້າອະງຸ່ນແຫ່ງຄວາມໂມໂຫອັນຮ້າຍແຮງຂອງພຣະເຈົ້າ
ຊຶ່ງຖືກເທອອກຢ່າງເຕັມລິດ ຖອກເຂົ້າຈອກແຫ່ງຄວາມຂຸ່ນເຄືອງຂອງເພິ່ນ ແລ້ວ
ເຂົາຜູ້ນັ້ນຊິຖືກທໍລະມານດ້ວຍໄຟກໍາມະຖັນຕໍ່ໜ້າເທວະທູດຜູ້ບໍລິສຸດທັງຫລາຍ
ກັບຕໍ່ໜ້າແກະນ້ອຍຂອງພຣະເຈົ້ານໍາ
14:11 ແລ້ວຄວັນຈາກການເຜົາທໍລະມານຂອງເຂົາລອຍຂຶ້ນຕະຫລອດການຊົ່ວ
ອັນຕະຫລອດໄປເປັນນິດ ແລ້ວເຂົາຊິບໍ່ມີການຢຸດພັກຜ່ອນເລີຍ ທັງກາງເວັນກັບ
ກາງຄືນ ຄືຜູ້ທີ່ບູຊາສັດເດລະສານກັບຮູບປັ້ນຂອງມັນ ກັບຜູ້ໃດກໍຕາມທີ່ຮັບ
ເຄື່ອງໝາຍຊື່ຂອງມັນ”
14:12 ໃນນີ້ເນາະ ເປັນຄວາມອົດທົນຂອງຄົນຂອງພຣະເຈົ້າ ຄືເປັນຜູ້ທີ່ຮັກສາຄໍາ
ສັ່ງຂອງພຣະເຈົ້າ ກັບຄວາມເຊື່ອໃນ ພຣະເຢຊູ
14:13 ແລ້ວຜູ້ຂ້າໄດ້ຍິນສຽງຂອງຜູ້ມີອໍານາດຈາກສະຫວັນ ສັ່ງຜູ້ຂ້າວ່າ “ໃຫ້ຂຽນ-
ໄວ້ເດີ້ ຄົນທັງຫລາຍທີ່ຕາຍຢູ່ໃນອົງພຣະຜູ້ເປັນເຈົ້າກໍຊິໄດ້ພົບເປັນສຸກ ເອີ້ ພຣະ-
ວິນຍານ ໄດ້ເວົ້າວ່າ ຄືເຂົາຊິມີການພັກຜ່ອນຍ່ອນໃຈຈາກງານອັນເມື່ອຍຫລ້າ
ຂອງເຂົາ ແລ້ວວ່າ ການງານອັນດີງາມຂອງເຂົາກໍຊິຕາມເຂົາໄປ”
14:14 ແລ້ວບັດນີ້ຜູ້ຂ້າໄດ້ຫລຽວເບິ່ງ ແລ້ວນີ້ແຫລະ ໄດ້ເຫັນມີເມກຂາວ ແລ້ວມີຜູ້
ໜຶ່ງໄດ້ນັ່ງເທິງເມກນັ້ນຄືກັນກັບບຸດມະນຸດ ເທິງຫົວຂອງເພິ່ນໃສ່ມົງກຸດທອງຄໍາ
ກັບໄດ້ຖືກ່ຽວຄົມໃນມືຂອງເພິ່ນ
14:15 ແລ້ວກໍມີເທວະທູດອີກອົງໜຶ່ງ ອອກມາຈາກພຣະວິຫານນັ້ນ ໄດ້ເວົ້າສຽງດັ່ງ
ກັບຜູ້ເພິ່ນທີ່ນັ່ງເທິງເມກນັ້ນວ່າ “ໃຫ້ລົງມືກ່ຽວໄປ *ໂລດ* ເດີ້ ຍ້ອນວ່າໄດ້ເຖິງຍາມ
ເກັບກ່ຽວແລ້ວ ຄື ຜົນທີ່ຊິຕ້ອງເກັບກ່ຽວໃນແຜ່ນດິນໂລກນັ້ນກໍສຸກແລ້ວ”

14:16 ກັບຜູ້ເພິ່ນທີ່ນັ່ງເທິງເມກນັ້ນ ໄດ້ລົງມືກ່ຽວເທິງແຜ່ນດິນໂລກ ແຜ່ນດິນໂລກ
ຈັ່ງຖືກການກ່ຽວໄປ
14:17 ແລ້ວກໍມີເທວະທູດອີກອົງໜຶ່ງ ໄດ້ອອກມາຈາກພຣະວິຫານນັ້ນຊຶ່ງຢູ່ເທິງສະ-
ຫວັນ ໄດ້ຖືກ່ຽວອັນທີ່ຄົມຄືກັນ
14:18 ແລ້ວກໍມີເທວະທູດອີກອົງໜຶ່ງ ໄດ້ອອກມາຈາກແທ່ນບູຊາ ອົງນັ້ນມີລິດອຳ-
ນາດເໜືອໄຟ ກັບໄດ້ຮ້ອງສຽງດັ່ງບອກເທວະທູດອົງທີ່ຖືກ່ຽວຄົມວ່າ *"ໃຫ້ເອົາ
ກ່ຽວຂອງເຈົ້າກ່ຽວເກັບພວງອະງຸ່ນຂອງແຜ່ນດິນໂລກ ຍ້ອນອະງຸ່ນນັ້ນສຸກເຕັມທີ່
ແລ້ວ"*
14:19 ຈັ່ງຊັ້ນ ເທວະທູດອົງນັ້ນ ໄດ້ແກວ່ງກ່ຽວເທິງແຜ່ນດິນໂລກ ຈັ່ງເກັບກ່ຽວຜົນ
ຂອງເຄືອອະງຸ່ນເທິງແຜ່ນດິນໂລກ ແລ້ວຈັ່ງເອົາອະງຸ່ນຖອກລົງໄປໃນບໍ່ຢ່ຳອະງຸ່ນ
ອັນໃຫຍ່ຫລວງແຫ່ງຄວາມໂມໂຫຂອງພຣະເຈົ້າ
14:20 ບໍ່ຢ່ຳອະງຸ່ນນັ້ນໄດ້ຕັ້ງຢ່ຳຢູ່ທາງນອກເມືອງ ພໍຢ່ຳແລ້ວເລືອດໄດ້ໄຫລອອກ
ມາຈາກບໍ່ຢ່ຳອະງຸ່ນນັ້ນ ຄວາມສູງເຖິງລະດັບບັງຫຽນມ້າ ໄຫລນອງໄປປະມານ
ສາມຮ້ອຍກິໂລແມັດ

## ພຣະນິມິດ ບົດທີ 15

15:1 ແລ້ວບັດນີ້ ຜູ້ຂ້າໄດ້ເຫັນເຄື່ອງໝາຍອັນສຳຄັນຢູ່ເທິງສະຫວັນອີກແນວໜຶ່ງ
ເປັນເຄື່ອງໝາຍອັນໃຫຍ່ຫລວງອັນເປັນຕາຢ້ານ ຄືມີເທວະທູດເຈັດອົງຖືໄພພິບັດ
ເຈັດແນວອັນສຸດທ້າຍ ຄື ໃນໄພພິບັດນັ້ນ ຄວາມໂມໂຫຂອງພຣະເຈົ້າໄດ້ຈົບລົງ
ແລ້ວ
15:2 ແລ້ວຜູ້ຂ້າໄດ້ເຫັນແນວໜຶ່ງ ມີລັກສະນະຄືທະເລແກ້ວປົນກັບໄຟ ແລ້ວພວກ
ຄົນທັງຫລາຍທີ່ມີໄຊເໜືອສັດເດລະສານ ເໜືອຮູບປັ້ນຂອງມັນ ເໜືອເຄື່ອງໝາຍ
ຂອງມັນ ພ້ອມທັງເໜືອເລກປະຈຳຊື່ຂອງມັນ ໄດ້ຢືນຢູ່ເທິງທະເລແກ້ວນັ້ນ ແລ້ວ
ພວກເຂົາແຕ່ລະຄົນຖືພິນເຂົາຄູ່ຂອງພຣະເຈົ້າ
15:3 ແລ້ວພວກເຂົາຮ້ອງເພງຂອງ ໂມເຊ ຜູ້ຮັບໃຊ້ຂອງພຣະເຈົ້າ ກັບເພງຂອງ
ແກະນ້ອຍຂອງພຣະເຈົ້າ ວ່າ "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ເພິ່ນລິດທານຸພາບສູງ
ສຸດເອີຍ ການງານຂອງພຣະອົງກໍຍິ່ງໃຫຍ່ຫລວງ ກັບມະຫັດສະຈັນຫລາຍ ຂ້າ

ແຕ່ອົງພຣະຜູ້ເປັນເຈົ້າ ທາງຂອງພຣະອົງຍຸດຕິທຳກັບຊື່ກົງຢູ່ສະເໝີ ໂອ້ຈອມ ລາ-
ຊາ ຄົນຂອງພຣະເຈົ້າທັງຫລາຍເອີຍ
15:4 ໂອ ຂ້າແຕ່ອົງພຣະຜູ້ເປັນເຈົ້າເອີຍ ແມ່ນໃຜແໜ່ທີ່ຊິບໍ່ເຄົາລົບພຣະອົງ ກັບບໍ່
ຖວາຍສະຫງ່າລາສີຕໍ່ພຣະນາມຂອງພຣະອົງ ຍ້ອນວ່າ ພຣະອົງເປັນຜູ້ບໍລິສຸດແຕ່
ຜູ້ດຽວ ປະຊາຊາດທັງປວງຊິມາຖວາຍການນະມັດສະການຕໍ່ໜ້າພຣະອົງ ຍ້ອນ
ວ່າ ການຕັດສິນພິພາກສາຂອງພຣະອົງໄດ້ປາກົດອອກມາແລ້ວ”
15:5 ແລ້ວຫລັງຈາກແນວໝູ່ນີ້ ຜູ້ຂ້າໄດ້ຫລຽວເບິ່ງ ແລ້ວນີ້ແຫລະ ໄດ້ເຫັນສະຖານ
ສັກສິດບໍລິສຸດຂອງພຣະວິຫານແຫ່ງສັກຂີພະຍານໃນສະຫວັນຖືກເປີດອອກ
15:6 ແລ້ວເທວະທູດທັງເຈັດທີ່ຖືໄພພິບັດທັງເຈັດນັ້ນ ໄດ້ອອກມາຈາກພຣະວິຫານ
ນຸ່ງຜ້າປ່ານສີຂາວບໍລິສຸດ ກັບມີຜ້າທອງຄຳພັນໄວ້ທີ່ໜ້າເອິກ
15:7 ແລ້ວກໍມີສັດໂຕໜຶ່ງໃນສັດທັງສີ່ນັ້ນ ໄດ້ເອົາຂັນທອງຄຳເຈັດໃບ ອັນເຕັມດ້ວຍ
ຄວາມໂມໂຫຂອງພຣະເຈົ້າ ຜູ້ເພິ່ນທີ່ດຳລົງຢູ່ຕະຫລອດການເປັນນິດ ໄດ້ມອບ
ຂັນທອງຄຳໃຫ້ເທວະທູດທັງເຈັດອົງນັ້ນ
15:8 ແລ້ວພຣະວິຫານກໍເຕັມໄປດ້ວຍຄວັນຈາກສະຫງ່າລາສີຂອງພຣະເຈົ້າ ກັບ
ຈາກລິດທານຸພາບຂອງເພິ່ນ ກັບບໍ່ມີໃຜສາມາດເຂົ້າໄປໃນພຣະວິຫານນັ້ນໄດ້
ເລີຍ ຈົນກວ່າໄພພິບັດທັງເຈັດຂອງເທວະທູດເຈັດອົງນັ້ນຊິໄດ້ສຳເລັດ

## ພຣະນິມິດ ບົດທີ 16

16:1 ແລ້ວຜູ້ຂ້າກໍໄດ້ຍິນສຽງເວົ້າອັນດັງ ອອກມາຈາກພຣະວິຫານ ສັ່ງເທວະທູດທັງ
ເຈັດອົງນັ້ນວ່າ “ໃຫ້ອອກໄປເດີ້ ເອົາຂັນທັງເຈັດໄປນຳ ແນວທີ່ເຕັມໄປດ້ວຍ
ຄວາມໂມໂຫອັນຮ້າຍແຮງຂອງພຣະເຈົ້າ ແລ້ວໃຫ້ເທລົງໃສ່ແຜ່ນດິນໂລກເດີ້”
16:2 ຈັ່ງຊັ້ນ ເທວະທູດອົງແຮກໄດ້ອອກໄປເທຂັນຂອງເຂົາລົງໃສ່ແຜ່ນດິນໂລກ ພໍ-
ດີຄົນທັງຫລາຍທີ່ມີເຄື່ອງໝາຍຂອງສັດເດລະສານ ກັບບູຊາຮູບປັ້ນຂອງມັນ ກໍ-
ໄດ້ເກີດແຜເປັນໆ ອັນຊົ່ວຮ້າຍ ເປັນຕາຂີ້ດຽດ
16:3 ແລ້ວເທວະທູດອົງທີ່ສອງໄດ້ເທຂັນຂອງເຂົາລົງໃນທະເລ ແລ້ວທະເລກາຍ-
ເປັນເລືອດຄືເລືອດຂອງຄົນຕາຍ ແລ້ວໝົດຄູ່ອັນຄູ່ແນວທີ່ມີຊີວິດຢູ່ໃນທະເລນັ້ນ
ຕາຍໄປໝົດ

16:4 ແລ້ວເທວະທູດອົງທີ່ສາມໄດ້ເທຂັນຂອງເຂົາລົງໃນແມ່ນ້ຳ ກັບໃນແຫລ່ງນ້ຳພຸ
ແລ້ວນ້ຳທັງໝົດທັງປວງນັ້ນກໍກາຍເປັນເລືອດເລີຍ
16:5 ແລ້ວຜູ້ຂ້າໄດ້ຍິນເທວະທູດອົງທີ່ປົກຄອງເໜືອນ້ຳເວົ້າວ່າ “ໂອ້ ຂ້າແຕ່ອົງ-
ພຣະຜູ້ເປັນເຈົ້າເອີຍ ພຣະອົງເປັນຜູ້ຊອບທຳ ເປັນຜູ້ດຳລົງຢູ່ໃນປະຈຸບັນ ກັບໃນ
ກາລະກ່ອນ ກັບຢູ່ໃນອະນາຄົດ ຍ້ອນວ່າ ພຣະອົງໄດ້ຕັດສິນພິພາກສາແນວໝູ່ນີ້
ແລ້ວ
16:6 ຍ້ອນວ່າເຂົາທັງຫລາຍໄດ້ເຮັດໃຫ້ເລືອດຕົກ ຄືເລືອດຄົນຂອງພຣະອົງກັບ
ເລືອດພວກຜູ້ເປັນປາກເປັນສຽງຂອງພຣະອົງນຳ ການຕັດສິນພິພາກສານັ້ນກໍ
ຖືກຕ້ອງສຳລັບພວກເຂົາຢູ່ແລ້ວ”
16:7 ແລ້ວຜູ້ຂ້າໄດ້ຍິນເທວະທູດອີກອົງໜຶ່ງຊຶ່ງຢູ່ແທ່ນບູຊາ ເວົ້າວ່າ “ຖືກຕ້ອງແລ້ວ
ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ເພິ່ນລິດທານຸພາບສູງສຸດເອີຍ ການພິພາກສາ
ຂອງພຣະອົງກໍສັດຈິງທ່ຽງທຳແລ້ວ”
16:8 ແລ້ວເທວະທູດອົງທີ່ສີ່ໄດ້ເທຂັນຂອງເພິ່ນລົງໃສ່ດວງຕະເວັນ ກັບໄດ້ມອບ
ອຳນາດໃຫ້ມັນສາມາດດາດຜູ້ຄົນທັງຫລາຍດ້ວຍໄຟ
16:9 ຄວາມຮ້ອນແຮງອັນກ້ານັ້ນ ໄດ້ດາດຜູ້ຄົນທັງປວງ ແລ້ວພວກເຂົາຈັ່ງລົບຫລູ່
ໝິ່ນປະມາດພຣະນາມຂອງພຣະເຈົ້າ ຜູ້ເພິ່ນມີລິດເໜືອໄພພິບັດແນວໝູ່ນັ້ນ ແຕ່
ພວກເຂົາບໍ່ໄດ້ກັບໃຈ ກັບບໍ່ໄດ້ຖວາຍສະຫງ່າລາສີຕໍ່ເພິ່ນ
16:10 ແລ້ວເທວະທູດອົງທີ່ຫ້າໄດ້ເທຂັນຂອງເພິ່ນລົງໃສ່ຈຸດສູນກາງການປົກຄອງ
ຂອງສັດເດລະສານນັ້ນ ແລ້ວລາຊະອານາຈັກຂອງມັນກໍມືດໄປໝົດ ພວກຄົນໃນ
ນັ້ນຈັ່ງກັດລີ້ນຂອງໂຕເອງ ຍ້ອນຄວາມເຈັບແສບສາຫັດ
16:11 ແລ້ວພວກເຂົາແຮງລົບຫລູ່ໝິ່ນປະມາດພຣະເຈົ້າຢູ່ໃນສະຫວັນ ຍ້ອນ
ຄວາມເຈັບປວດ ກັບແຜເປັນໆ ຂອງເຂົາ ແຕ່ພວກເຂົາຍັງບໍ່ຍອມກັບໃຈເລີຍຈາກ
ການງານຂອງໂຕເອງ
16:12 ແລ້ວເທວະທູດອົງທີ່ຫົກໄດ້ເທຂັນຂອງເຂົາລົງໃສ່ແມ່ນ້ຳໃຫຍ່ຫລວງ ຄືແມ່-
ນ້ຳ ຢູຟາເຕ ຈັ່ງເຮັດໃຫ້ນ້ຳແຫ້ງລົງ ເພື່ອກຽມຫົນທາງໄວ້ໃຫ້ພວກກະສັດທີ່ຊິມາ
ຈາກທິດຕະເວັນອອກ

16:13 ແລ້ວຜູ້ຂ້າຫລຽວເບິ່ງ ໄດ້ເຫັນວິນຍານສົກກະປົກມົນທິນສາມໂຕ ມີລັກສະ-
ນະຄືກົບ ໄດ້ອອກມາຈາກປາກຂອງພະຍານາກ ກັບປາກຂອງສັດເດລະສານນັ້ນ
ພ້ອມກັບປາກຂອງຜູ້ພະຍາກອນບໍ່ຈິງນໍາ
16:14 ດ້ວຍວ່າ ວິນຍານສົກກະປົກມົນທິນພວກນີ້ເປັນວິນຍານຊົ່ວທີ່ເຮັດການອັດ-
ສະຈັນ ຊຶ່ງມັນອອກໄປຫາພວກກະສັດທັງຫລາຍຢູ່ແຜ່ນດິນໂລກ ເພື່ອໃຫ້ພວກ
ກະສັດນັ້ນຮ່ວມກັນເຮັດສົງຄາມຕໍ່ພຣະເຈົ້າ ໃນມື້ຍິ່ງໃຫຍ່ຫລວງຂອງເພິ່ນ ຜູ້
ເພິ່ນມີລິດທານຸພາບສູງສຸດ
16:15 “ນີ້ແຫລະ ເຮົາຊິມາຄືຂະໂມຍ ແລ້ວຜູ້ທີ່ເຝົ້າລະວັງໃຫ້ດີກັບຮັກສາເສື້ອຄຸມ
ຍາວຂອງໂຕກໍຊິໄດ້ພົບເປັນສຸກ ຢ້ານວ່າ ຜູ້ນັ້ນ ອາດ ຊິຍ່າງໄປຍ່າງເປືອຍກາຍ
ແລ້ວຜູ້ຄົນທັງຫລາຍຊິໄດ້ເຫັນຄວາມລະອາຍຂອງເຂົາ”
16:16 ແລ້ວວິນຍານທັງສາມນັ້ນ ໄດ້ຮ່ວມພວກກະສັດມານໍາກັນຢູ່ໜ້ອງໜຶ່ງ ຊຶ່ງ
ເອີ້ນວ່າ ທີ່ຮາບ ອາມາເຄໂດນ
16:17 ແລ້ວເທວະທູດອົງທີ່ເຈັດໄດ້ເທຂັນຂອງເພິ່ນລົງໃນອາກາດ ແລ້ວມີສຽງຂອງ
ຜູ້ມີອໍານາດເວົ້າອອກ ມາຈາກພຣະວິຫານຢູ່ສະຫວັນ ຄືຈາກພຣະທີ່ນັ່ງນັ້ນ ວ່າ
*“ເອີ້ ໝົດຄູ່ຢ່າງສໍາເລັດແລ້ວ”*
16:18 ແລ້ວໄດ້ມີສຽງຕ່າງໆ ມີຟ້າຮ້ອງ ຟ້າແມບ ແລ້ວເກີດແຜ່ນດິນໄຫວອັນໃຫຍ່-
ຫລວງ ຊຶ່ງບໍ່ເຄີຍມີແຜ່ນດິນໄຫວຢ່າງຮ້າຍແຮງຍິ່ງໃຫຍ່ຄືນີ້ຈັກເທື່ອເລີຍ ຕັ້ງແຕ່
ມີຄົນເກີດມາເທິງແຜ່ນດິນໂລກ
16:19 ແລ້ວມະຫານະຄອນນັ້ນກໍຖືກແຍກອອກຈາກກັນເປັນສາມສ່ວນ ກັບບ້ານ-
ເມືອງທັງຫລາຍຂອງນານາປະຊາຊາດກໍລົ້ມ ແລ້ວພຣະເຈົ້າບໍ່ໄດ້ລືມທີ່ຊິລົງໂທດ
ມະຫານະຄອນ ບາບີໂລນ ນັ້ນ ເພື່ອຊິໃຫ້ນາງດື່ມຈາກຈອກເຫລົ້າອະງຸ່ນແຫ່ງ
ຄວາມໂມໂຫອັນຮ້າຍຂອງເພິ່ນ
16:20 ແລ້ວພວກເກາະຕ່າງໆ ກໍໜີອອກໄປ ກັບພູເຂົາທັງຫລາຍກໍບໍ່ໄດ້ຮັບອີກ
16:21 ແລ້ວມີໝາກເຫັບໃຫຍ່ຕົກລົງມາຈາກທ້ອງຟ້າໃສ່ຜູ້ຄົນ ນໍ້າໜັກແຕ່ລະກ້ອນ
ປະມານຫ້າສິບກິໂລກຣາມ ແລ້ວຊາວໂລກທັງຫລາຍຈັ່ງໄດ້ລົບຫລູ່ໝິ່ນປະມາດ

ພຣະເຈົ້າອີກ ຍ້ອນໄພພິບັດທີ່ເກີດຈາກໝາກເຫັບນັ້ນ ຄືໄພພິບັດນັ້ນກໍໃຫຍ່-
ຫລວງທີ່ສຸດ

# ພຣະນິມິດ ບົດທີ 17

17:1 ແລ້ວມີເທວະທູດອົງໜຶ່ງໃນເຈັດອົງທີ່ຖືຂັນເຈັດໃບນັ້ນ ໄດ້ອອກມາເວົ້າກັບຜູ້-
ຂ້າວ່າ “ໃຫ້ມາພີ້ເດີ້ ເຮົາຊິໃຫ້ເຈົ້າເບິ່ງການຕັດສິນລົງໂທດຍິງໂສເພນີຜູ້ໃຫຍ່ຍິ່ງ
ນັ້ນ ທີ່ນັ່ງຢູ່ເທິງນໍ້າຫລວງຫລາຍ
17:2 ຄືເປັນຍິງທີ່ພວກກະສັດທັງຫລາຍທົ່ວແຜ່ນດິນໂລກໄດ້ຫລິ້ນຊູ້ນໍາ ຈັ່ງເຮັດໃຫ້
ຄົນທັງຫລາຍຢູ່ທົ່ວໂລກກິນຈົນເມົາເຫລົ້າອະງຸ່ນແຫ່ງການຫລິ້ນຊູ້ຂອງນາງ”
17:3 ຈັ່ງຊັ້ນ ເທວະທູດອົງນັ້ນໄດ້ນໍາຜູ້ຂ້າເຂົ້າໄປໃນຖິ່ນແຫ້ງແລ້ງໂດຍໃນ ພຣະ-
ວິນຍານ ແລ້ວຜູ້ຂ້າໄດ້ເຫັນແມ່ຍິງຄົນໜຶ່ງນັ່ງຢູ່ເທິງສັດເດລະສານສີແດງເຂັ້ມໂຕ
ໜຶ່ງ ຊຶ່ງສັດໂຕນັ້ນເຕັມໄປດ້ວຍຊື່ຫລາຍຊື່ເປັນຄໍາໝິ່ນປະມາດທັງນັ້ນ ແລ້ວມັນມີ
ເຈັດຫົວກັບສິບເຂົາ
17:4 ແລ້ວແມ່ຍິງນັ້ນໄດ້ນຸ່ງຜ້າສີມ່ວງກັບສີແດງເຂັ້ມ ມີເຄື່ອງປະດັບເປັນທອງຄໍາ
ເພັດພອຍຕ່າງໆ ກັບໄຂ່ມຸກ ແລ້ວຍິງນັ້ນໄດ້ຖືຈອກທອງຄໍາທີ່ເຕັມໄປດ້ວຍແນວ
ເປັນຕາຊັງ ຄືແນວສົກກະປົກລາມົກ ຊຶ່ງມາຈາກການຫລິ້ນຊູ້ຂອງນາງ
17:5 ແລ້ວໜ້າຜາກຂອງນາງຂຽນຊື່ໄວ້ວ່າ “ເລິກລັບ ບາບີໂລນ ມະຫານະຄອນ
ເຈົ້າແມ່ຂອງຍິງໂສເພນີທັງຫລາຍ ກັບວ່າ ກັບຂອງແນວສົກກະປົກລາມົກທັງ-
ປວງເທິງແຜ່ນດິນໂລກ”
17:6 ແລ້ວຜູ້ຂ້າໄດ້ເຫັນຍິງນັ້ນ ເມົາດ້ວຍເລືອດຄົນຂອງພຣະເຈົ້າ ກັບເລືອດຂອງ
ຄົນທັງຫລາຍທີ່ຍອມຕາຍຍ້ອນຄໍາພະຍານເຖິງ ພຣະເຢຊູ ບັດຜູ້ຂ້າເຫັນຍິງນັ້ນ
ແລ້ວ ຜູ້ຂ້າກໍແປກໃຈເປັນຕາງຶດຫລາຍ
17:7 ແຕ່ເທວະທູດອົງນັ້ນຈັ່ງຖາມຜູ້ຂ້າວ່າ “ເປັນຫຍັງເຈົ້າຄືແປກໃຈ ເຮົາຊິບອກ
ໃຫ້ເຈົ້າຮູ້ເຖິງເລື່ອງອັນເລິກລັບຂອງຍິງນັ້ນ ກັບຂອງສັດເດລະສານທີ່ຍິງນັ້ນຂີ່ໄປ
ທີ່ມີເຈັດຫົວກັບສິບເຂົາ
17:8 ແລ້ວສັດເດລະສານທີ່ເຈົ້າໄດ້ເຫັນນັ້ນ ທີ່ເຄີຍຢູ່ມາກ່ອນ ແຕ່ບໍ່ໄດ້ຢູ່ໃນປະຈຸ-
ບັນ ແລ້ວຊິຂຶ້ນມາຈາກເຫວເລິກອັນບໍ່ມີສໍາເລັດ ຈັ່ງເຂົ້າສູ່ຄວາມພິນາດ ແລ້ວຜູ້

ຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກ ຄືຜູ້ທີ່ບໍ່ມີຊື່ຈົດໄວ້ໃນໜັງສືແຫ່ງຊີວິດຕັ້ງແຕ່
ການສ້າງໂລກ ເຂົາກໍຊິແປກໃຈບັດເຂົາເຫັນສັດເດລະສານນັ້ນ ທີ່ເຄີຍຢູ່ມາກ່ອນ
ແຕ່ບໍ່ໄດ້ຢູ່ໃນປະຈຸບັນ ແລ້ວກໍຍັງຢູ່ຕໍ່ອີກ
17:9 ນີ້ຕ້ອງໃຊ້ຄວາມຄິດໃນທາງສະຕິປັນຍາ ຫົວທັງເຈັດນັ້ນຄືພູເຂົາເຈັດຍອດທີ່
ຍິງນັ້ນນັ່ງຢູ່
17:10 ແລ້ວໄດ້ມີກະສັດເຈັດອົງ ຊຶ່ງຫ້າອົງໃນເຈັດໄດ້ລົ້ມລົງແລ້ວ ແລ້ວມີອົງໜຶ່ງ
ພວມຕັ້ງຢູ່ ກັບອີກອົງໜຶ່ງຍັງບໍ່ທັນຕັ້ງຂຶ້ນ ກັບບັດຕັ້ງຂຶ້ນມາແລ້ວ ຊິຕ້ອງດຳລົງຢູ່ບໍ່
ໂດນ
17:11 ແລ້ວສັດເດລະສານນັ້ນ ທີ່ເຄີຍຢູ່ມາກ່ອນ ແຕ່ບໍ່ໄດ້ຢູ່ໃນປະຈຸບັນ ມັນຊິເປັນ
ອົງທີ່ແປດ ຕໍ່ມາຈາກເຈັດອົງນັ້ນ ແລ້ວມັນກໍຊິເຂົ້າສູ່ຄວາມພິນາດ
17:12 ແລ້ວເຂົາທັງສິບທີ່ເຈົ້າໄດ້ເຫັນນັ້ນ ແມ່ນກະສັດສິບອົງຊຶ່ງຍັງບໍ່ທັນໄດ້ຄອງ
ລາຊະສົມບັດ ແຕ່ເຂົາຊິຮັບມອບອຳນາດເປັນເວລາໜຶ່ງຊົ່ວໂມງ ຮ່ວມກັນກັບສັດ
ເດລະສານນັ້ນ
17:13 ກະສັດພວກນີ້ມີຈຸດປະສົງແນວດຽວກັນ ຄືວ່າຊິມອບອຳນາດກັບລິດກຳລັງ
ຂອງພວກເຂົາໄວ້ໃຫ້ສັດເດລະສານນັ້ນ
17:14 ແລ້ວກະສັດພວກນີ້ກໍຊິເຮັດສົງຄາມ ຕໍ່ສູ້ກັບແກະນ້ອຍຂອງພຣະເຈົ້າ
ແລ້ວແກະນ້ອຍຊິຊະນະພວກເຂົາ ຍ້ອນວ່າເພິ່ນເປັນຫົວໜ້າເໜືອຫົວໜ້າທັງ-
ຫລາຍ ກັບເປັນ ພຣະມະຫາກະສັດ ເໜືອກະສັດທັງຫລາຍ ແລ້ວຜູ້ທີ່ຢູ່ກັບເພິ່ນ
ນັ້ນ ກໍໄດ້ຮັບການເອີ້ນການເຊີນ ການເລືອກ ກັບເປັນຜູ້ຈົ່ງຮັກພັກດີ”
17:15 ແລ້ວເທວະທູດນັ້ນເລີຍບອກຜູ້ຂ້າວ່າ “ນ້ຳຫລວງຫລາຍທີ່ເຈົ້າໄດ້ເຫັນຍິງ
ໂສເພນີນັ່ງຢູ່ຫັ້ນ ຄື ເຜົ່າພັນ ມວນຊົນ ປະຊາຊາດ ກັບພາສາ ຕ່າງໆ ຂອງມະນຸດ
ໂລກທັງປວງ
17:16 ແລ້ວສິບເຂົາທີ່ເຈົ້າໄດ້ເຫັນຂອງສັດເດລະສານນັ້ນ ຊິຮ່ວມກັນຊັງຍິງໂສເພນີ
ຈັ່ງເຮັດໃຫ້ນາງຢູ່ໂດດດ່ຽວອ້າງວ້າງກັບເປືອຍກາຍເລີຍ ກັບຊິກິນເນື້ອໜັງກິນໂຕ
ຂອງນາງ ແລ້ວຊິເຜົານາງດ້ວຍໄຟ

17:17 ຍ້ອນວ່າ ພຣະເຈົ້າດົນໃຈເຂົາໃຫ້ເຮັດແນວນັ້ນຕາມຈຸດປະສົງຂອງເພິ່ນ ຄື
ໃຫ້ເປັນນໍ້າໜຶ່ງໃຈດຽວກັນໃນການມອບລາຊະອານາຈັກຂອງເພິ່ນ ໄວ້ໃຫ້ສັດເດ-
ລະສານນັ້ນ ຈົນກວ່າຖ້ອຍຄໍາຂອງພຣະເຈົ້າຊິສໍາເລັດຜົນ
17:18 ແລ້ວຝ່າຍແມ່ຍິງທີ່ເຈົ້າເຫັນ ຄື ມະຫານະຄອນອັນໃຫຍ່ຫລວງນັ້ນ ທີ່ມີອໍາ-
ນາດປົກຄອງເໜືອກະສັດທັງຫລາຍທົ່ວແຜ່ນດິນໂລກ"

## ພຣະນິມິດ ບົດທີ 18

18:1 ຫລັງຈາກເຫດການແນວໝູ່ນີ້ ຜູ້ຂ້າໄດ້ຫລຽວເບິ່ງ ເຫັນເທວະທູດອີກອົງໜຶ່ງ
ພວມລົງມາຈາກສະຫວັນ ອົງນັ້ນມີອໍານາດໃຫຍ່ຫລວງ ແຜ່ນດິນໂລກຈັ່ງສະ-
ຫວ່າງໄປທົ່ວຍ້ອນແສງລັດສະໝີຂອງອົງນັ້ນ
18:2 ເທວະທູດອົງນັ້ນຈັ່ງໄດ້ປະກາດດ້ວຍສຽງດັ່ງດັງກ້ອງວ່າ "ລົ້ມແລ້ວ ລົ້ມແລ້ວ
ບາບີໂລນ ມະຫານະຄອນ ນັ້ນໄດ້ລົ້ມແລ້ວ ກາຍເປັນໝ້ອງອາໄສຂອງຜີປີສາດ
ເປັນທີ່ສິງຂອງວິນຍານສົກກະປົກລາມົກຄູ່ແນວ ກັບເປັນກົງຂອງພວກນົກສົກ-
ກະປົກມົນທິນອັນເປັນຕາຊັງ
18:3 ຍ້ອນວ່າປະຊາຊາດທັງປວງໄດ້ກິນເຫລົ້າອະງຸ່ນຈາກຈອກຄວາມໂມໂຫອັນ
ຮ້າຍແຮງຂອງພຣະເຈົ້າ ຍ້ອນການລ່ວງປະເວນີຂອງນາງ ທີ່ວ່າພວກກະສັດເທິງ-
ແຜ່ນດິນໂລກໄດ້ຫລິ້ນຊູ້ກັບນາງນັ້ນ ແລ້ວພໍ່ຄ້າທັງຫລາຍເທິງແຜ່ນດິນໂລກກໍໄດ້
ຮັ່ງມີໄດ້ຍ້ອນຄວາມຟຸ່ມເຟືອຍອັນເຫລືອລົ້ນຂອງນາງນັ້ນນໍາ"
18:4 ແລ້ວຜູ້ຂ້າໄດ້ຍິນສຽງເວົ້າອີກສຽງໜຶ່ງປະກາດລົງມາຈາກສະຫວັນ ວ່າ "ຄົນ
ທັງຫລາຍຂອງເຮົາເອີຍ ໃຫ້ໜີພົ້ນຈາກນາງນັ້ນເດີ້ ເພື່ອພວກເຈົ້າຊິບໍ່ມີຫຸ້ນສ່ວນ
ໃນການບາບກັບນາງ ແລ້ວພວກເຈົ້າຊິບໍ່ຕ້ອງຖືກໄພພິບັດທີ່ຊິເກີດຂຶ້ນກັບນາງ
18:5 ຍ້ອນວ່າບາບຂອງນາງໄດ້ກອງກັນຂຶ້ນຮອດສະຫວັນແລ້ວ ແລ້ວພຣະເຈົ້າໄດ້
ຈໍາຄວາມຊົ່ວຊ້າເລວຊາມຂອງນາງນັ້ນໄວ້
18:6 ແລ້ວພຣະເຈົ້າຊິຕອບສະໜອງນາງຕາມທີ່ນາງໄດ້ຕອບສະໜອງພວກເຈົ້າ
ແລ້ວເພິ່ນຊິໃຫ້ຜົນຕອບແທນນາງເປັນສອງທໍ່ຕາມການງານຂອງນາງ ໃນຈອກທີ່
ນາງໄດ້ປະສົມໄວ້ ກໍຊິປະສົມລົງເປັນສອງທໍ່ໃຫ້ນາງນັ້ນເລີຍ

18:7 ໃນທຳນອງດຽວກັນ ນາງເຄີຍທະນົງໂຕດ້ວຍສັກສີ ກັບຊີວິດຢ່າງຫລູຫລາໄວ້
ໃຫ້ໂຕເອງຊ້ຳໃດ ພຣະເຈົ້າກໍຊິໃຫ້ນາງຖືກການທຸກທໍລະມານຫລາຍຊ້ຳນັ້ນ
ຍ້ອນວ່າ ນາງໄດ້ເວົ້າໃນໃຈວ່າ 'ເຮົາດຳລົງຢູ່ໃນຕຳແໜ່ງລາຊິນີ ບໍ່ແມ່ນແມ່ໝ້າຍ
ເຮົາຊິບໍ່ໄດ້ຮັບຄວາມທຸກເລີຍ'
18:8 ຈັ່ງຊັ້ນ ໄພພິບັດຕ່າງໆ ຊິເກີດຂຶ້ນໃຫ້ນາງໃນມື້ດຽວ ຄືຄວາມຕາຍ ກັບຄວາມ
ໂສກເສົ້າ ການກັນດານອາຫານ ພ້ອມໄຟທີ່ຊິເຜົານະຄອນຂອງນາງນັ້ນໃຫ້ພິ-
ນາດໝົດສິ້ນສຸດໄປ ຍ້ອນວ່າອົງພຣະຜູ້ເປັນເຈົ້າ ຜູ້ເພິ່ນມີລິດທານຸພາບໃຫຍ່ຍິ່ງ
ກໍຊິພິພາກສາລົງໂທດໃສ່ນາງກັບນະຄອນນັ້ນ"
18:9 ແລ້ວພວກກະສັດຢູ່ແຜ່ນດິນໂລກ ທີ່ໄດ້ຫລິ້ນຊູ້ກັບນາງນັ້ນ ກັບມີຊີວິດຢ່າງ
ຫລູຫລາຮ່ວມກັນ ບັດໄດ້ເຫັນຄວັນໄຟເຜົາໄໝ້ນະຄອນຂອງນາງ ກໍຊິໂສກເສົ້າ
ຮ້ອງໄຫ້ນຳເລີຍ
18:10 ແລ້ວພວກເຂົາກໍຢືນຢູ່ແຕ່ໄກໆ ຍ້ອນຢ້ານໄພຈາກການທໍລະມານຂອງນາງ
ນັ້ນ ເວົ້າກັນວ່າ "ຈິບຫາຍແລ້ວໆ ບາບີໂລນ ມະຫານະຄອນອັນຍິ່ງໃຫຍ່ໝັ້ນຄົງ
ເອີຍ ຄືພາຍໃນຊົ່ວໂມງດຽວ ເຈົ້າໄດ້ສູ່ການພິພາກສາລົງໂທດແລ້ວ"
18:11 ແລ້ວພວກພໍ່ຄ້າຢູ່ແຜ່ນດິນໂລກຊິຮ້ອງໄຫ້ຮ້ອງໄຫ້ຕໍ່ນະຄອນຂອງນາງນັ້ນ
ຍ້ອນວ່າບໍ່ມີໃຜຊິສາມາດຊື້ຂາຍອີກຕໍ່ໄປໄດ້ເລີຍ
18:12 ຊິນຄ້າແນວໝູ່ນັ້ນຄື ທອງຄຳ ເງິນ ເພັດພອຍຕ່າງໆ ໄຂ່ມຸກ ຜ້າປ່ານເນື້ອ-
ລະອຽດ ຜ້າສີມ່ວງ ຜ້າບໍ່ ຜ້າສີແດງເຂັ້ມ ໄມ້ຫອມຄູ່ແນວ ພວກຖ້ວຍຊາມທີ່ເຮັດ
ດ້ວຍງາ ກັບເຮັດດ້ວຍໄມ້ທີ່ເປັນລາຄາ ທອງເຫລືອງ ເຫລັກ ພ້ອມກັບຫີນອ່ອນ
18:13 ກັບອົບເຊີຍ ເຄື່ອງເທດ ເຄື່ອງຫອມ ກຳຍານ ເຫລົ້າອະງຸ່ນ ນ້ຳມັນ ຍອດແປ້ງ
ເຂົ້າວີດ ສັດຕ່າງໆ ເຊັ່ນ ງົວ ແກະ ມ້າ ແລ້ວກໍລົດຮົບ ກັບຂ້າທາດ ທັງຊີວິດຈິດໃຈ
ຂອງຄົນນຳ
18:14 ແລ້ວນາງເອີຍ ຜົນທີ່ຈິດໃຈຂອງເຈົ້າໄດ້ປາດຖະໜານັ້ນ ໄດ້ພົ້ນຈາກມືຂອງ
ເຈົ້າໄປແລ້ວ ພ້ອມກັບໝົດຄູ່ອັນຄູ່ແນວອັນວິເສດຫລູຫລາຫລາຍ ກໍໄດ້ພົ້ນຈາກ
ເຈົ້າໄປຄືກັນ ແລ້ວເຈົ້າຊິບໍ່ໄດ້ຮັບມັນອີກເລີຍ

18:15 ແລ້ວພວກພໍ່ຄ້າທີ່ຄ້າຂາຍສິ່ງຂອງແບບໝູ່ນີ້ ກັບຮັ່ງມີຍ້ອນນາງ ກໍຊິຢືນຢູ່ແຕ່
ໄກໆ ຍ້ອນຢ້ານໄພຈາກການທໍລະມານຂອງນາງນັ້ນ ແລ້ວພວກເຂົາກໍຊິຮ້ອງໄຫ້
ຮ້ອງໄຫ້ຢູ່ຫັ້ນ
18:16 ວ່າ "ຈິບຫາຍ ຈິບຫາຍ ເລີຍ ມະຫານະຄອນຂອງນາງນັ້ນ ຊຶ່ງໄດ້ນຸ່ງຜ້າ-
ປ່ານເນື້ອລະອຽດ ຜ້າສີມ່ວງ ກັບຜ້າສີແດງເຂັ້ມ ທີ່ໄດ້ປະດັບດ້ວຍທອງຄຳ ເພັດ-
ພອຍຕ່າງໆ ກັບໄຂ່ມຸກນັ້ນ
18:17 ຄື ພາຍໃນຊົ່ວໂມງດຽວ ຊັບສົມບັດອັນຍິ່ງໃຫຍ່ນັ້ນ ໄດ້ສາບສູນໄປໝົດ
ແລ້ວ" ແລ້ວນາຍເຮືອຄູ່ຄົນ ພວກຜູ້ໂດຍສານເຮືອ ພວກລູກເຮືອ ກັບຄົນທັງ-
ຫລາຍທີ່ມີອາຊີບທາງທະເລ ກໍໄດ້ຢືນຢູ່ແຕ່ໄກໆ ນຳ
18:18 ແລ້ວບັດຄົນພວກນັ້ນເຫັນຄວັນໄຟທີ່ເຜົາໄໝ້ນະຄອນຂອງນາງນັ້ນກໍຮ້ອງ
ວ່າ *"ມີນະຄອນຢູ່ໃສ ທີ່ຊິເປັນໃຫຍ່ຄືກັນກັບມະຫານະຄອນນີ້"*
18:19 ແລ້ວເຂົາທັງຫລາຍກໍໂຍນຂີ້ດິນຂຶ້ນຕົກລົງເທິງຫົວຂອງໂຕ ພ້ອມຮ້ອງໄຫ້
ຮ້ອງໄຫ້ວ່າ "ຈິບຫາຍ ຈິບຫາຍ ເລີຍ ມະຫານະຄອນນັ້ນ ຊຶ່ງເປັນນະຄອນທີ່
ໝົດຄູ່ຄົນທີ່ມີເຮືອຢ່າງທະເລ ໄດ້ເປັນຄົນຮັ່ງມີຍ້ອນຊັບຂອງນາງ ຄືພາຍໃນຊົ່ວ
ໂມງດຽວນະຄອນຂອງນາງກໍຮົກຮ້າງອ້າງວ້າງໄປແລ້ວ"
18:20 ໂອ ເມືອງສະຫວັນເອີຍ ພ້ອມກັບທູດພິເສດທີ່ບໍລິສຸດ ກັບຜູ້ເປັນປາກເປັນ-
ສຽງຂອງພຣະເຈົ້າທັງຫລາຍນຳ ໃຫ້ລ່າເລີງຍິນດີເດີ້ ຍ້ອນວ່າ ພຣະເຈົ້າໄດ້ແກ້
ແຄ້ນໃຫ້ພວກເຈົ້າໄດ້ແລ້ວ
18:21 ແລ້ວມີເທວະທູດອີກອົງໜຶ່ງທີ່ມີລິດອຳນາດອັນໃຫຍ່ຍິ່ງ ໄດ້ຍົກຫີນໂມ້ກ້ອນ
ໃຫຍ່ກ້ອນໜຶ່ງ ແລ້ວຈັ່ງທຸ້ມລົງໄປໃນທະເລ ເວົ້າວ່າ " ບາບີໂລນ ມະຫານະຄອນ
ນັ້ນ ຊິຖືກທຸ້ມລົງແບບນີ້ເນາະ ແລ້ວຊິບໍ່ເຫັນອີກຕໍ່ໄປເລີຍ
18:22 ແລ້ວບໍ່ມີໃຜຊິໄດ້ຍິນສຽງຂອງນັກດີດພິນເຂົາຄູ່ ນັກຮ້ອງ ນັກເປົ່າປີ່ ກັບນັກ
ເປົ່າແກ ໃນມະຫານະຄອນຂອງນາງນັ້ນອີກຕໍ່ໄປເລີຍ ແລ້ວຊິບໍ່ມີຊ່າງ ຫລືພະ-
ແນກຊ່າງຕ່າງໆ ອີກຕໍ່ໄປ ກັບຊິບໍ່ມີໃຜໄດ້ຍິນສຽງໂມ້ແປ້ງໃນມະຫານະຄອນຂອງ
ນາງອີກນຳ

18:23 ແລ້ວຊິບໍ່ມີແສງໂຄມໄຟສ່ອງສະຫວ່າງອີກຕໍ່ໄປໃນມະຫານະຄອນຂອງນາງ
ກັບຊິບໍ່ມີສຽງຂອງເຈົ້າບ່າວເຈົ້າສາວຕໍ່ໄປອີກ  ຍ້ອນວ່າ ພວກພໍ່ຄ້າຂອງມະຫາ-
ນະຄອນຂອງນາງຊຶ່ງເຄີຍເປັນຄົນໃຫຍ່ຢູ່ແຜ່ນດິນໂລກມາກ່ອນ  ກັບຍ້ອນວ່າ
ເວດມົນຄາຖາຂອງນາງເຄີຍລໍ້ລວງພວກປະຊາຊາດໃຫ້ລຸ່ມຫລົງ
18:24 ກັບໃນນະຄອນຂອງນາງນັ້ນ ໄດ້ຮັບເລືອດຂອງພວກຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າ ກັບເລືອດຄົນຂອງພຣະເຈົ້າ ພ້ອມທັງເລືອດຂອງໝົດທູ່ຄົນທີ່ຖືກ
ຂ້າເທິງແຜ່ນດິນໂລກນໍາ”

## ພຣະນິມິດ ບົດທີ 19

19:1 ຫລັງຈາກເຫດການແນວໝູ່ນີ້ ຜູ້ຂ້າໄດ້ຍິນສຽງດັ່ງດັງກ້ອງ ຂອງຜູ້ຄົນກຸ່ມຂະ-
ໜາດໃຫຍ່ຫລວງຢູ່ເທິງສະຫວັນ  ຮ້ອງກັນວ່າ “ ຮາເລລູຢາ ໆ ຄວາມພົ້ນ ສະ-
ຫງ່າລາສີ ກັບລິດທານຸພາບ ຈົ່ງມີແດ່ອົງພຣະຜູ້ເປັນເຈົ້າຂອງພວກເຮົາເຖີດ
19:2 ‘ຍ້ອນວ່າ ການພິພາກສາຂອງເພິ່ນກໍຊື່ກົງທ່ຽງທໍາ’ ຄືເພິ່ນໄດ້ພິພາກສາລົງ-
ໂທດຍິງໂສເພນີອັນໃຫຍ່ຫລວງຜູ້ນັ້ນ  ແມ່ນຜູ້ທີ່ເຮັດໃຫ້ແຜ່ນດິນໂລກເສື່ອມ-
ຊາມລົງ ຍ້ອນການຫລິ້ນຊູ້ຂອງນາງ  ແລ້ວເພິ່ນໄດ້ແກ້ແຄ້ນໃສ່ນາງນັ້ນເພື່ອ
ຕອບສະໜອງເລືອດຂອງພວກຜູ້ຮັບໃຊ້ຂອງເພິ່ນທີ່ໂດນຂ້າຕາຍໂດຍມືຂອງ
ນາງ”
19:3 ແລ້ວພວກເຂົາຮ້ອງອີກວ່າ “ ຮາເລລູຢາ ໆ ຄວັນໄຟທີ່ເກີດຈາກນະຄອນຂອງ
ນາງນັ້ນໄດ້ລອຍຂຶ້ນຕະຫລອດໄປເປັນນິດ”
19:4 ແລ້ວພວກຜູ້ຫລັກຜູ້ໃຫຍ່ທັງຊາວສີ່ຄົນ ພ້ອມສັດທັງສີ່ນັ້ນ ໄດ້ໝອບຂາບລົງ
ຖວາຍນະມັດສະການພຣະເຈົ້າ ຜູ້ນັ່ງເທິງພຣະທີ່ນັ່ງນັ້ນ ແລ້ວພວກເຂົາໄດ້ຮ້ອງ
ວ່າ “ອາເມນ  ຮາເລລູຢາ ”
19:5 ແລ້ວມີສຽງເວົ້າອອກມາຈາກພຣະທີ່ນັ່ງວ່າ “ໃຫ້ສັນລະເສີນພຣະເຈົ້າຂອງເຮົາ
ເດີ້ ພວກເຈົ້າທັງຫລາຍທີ່ເປັນຜູ້ຮັບໃຊ້ຂອງເພິ່ນ ກັບຜູ້ທີ່ເຄົາລົບເພິ່ນ ທັງຜູ້ໃຫຍ່
ກັບຜູ້ນ້ອຍ”

19:6 ແລ້ວຜູ້ຂ້າໄດ້ຍິນສຽງຂອງກຸ່ມຄົນຫລວງຫລາຍ ຄືສຽງນໍ້າຈຳນວນຫລາຍ ກັບ
ສຽງຟ້າຮ້ອງດັງສະໜັ່ນວ່າ “ ຮາເລລູຢາ ໆ ອົງພຣະຜູ້ເປັນເຈົ້າຜູ້ເພິ່ນລິດທານຸ-
ພາບສູງສຸດຄອບຄອງຢູ່
19:7 ຂໍໃຫ້ພວກເຮົາທັງຫລາຍຖວາຍສະຫງ່າລາສີຕໍ່ພຣະເຈົ້າ ດ້ວຍຄວາມຊື່ນຊົມ-
ຍິນດີ ເປັນຢ່າງຍິ່ງ ຍ້ອນວ່າ ຍາມແຕ່ງງານຂອງແກະນ້ອຍຂອງພຣະເຈົ້າໄດ້ມາ
ຮອດແລ້ວ ຊຶ່ງເຈົ້າສາວຂອງເພິ່ນໄດ້ກຽມໂຕພ້ອມນຳ
19:8 ແລ້ວນາງໄດ້ຮັບອະນຸຍາດສວມຜ້າປ່ານເນື້ອລະອຽດ ຂາວບໍລິສຸດສົດໃສ ຄື
ຜ້າປ່ານເນື້ອລະອຽດ ຊຶ່ງເປັນການງານອັນຊອບທຳຂອງຄົນຂອງພຣະເຈົ້າ”
19:9 ແລ້ວເທວະທູດອົງນັ້ນສັ່ງຜູ້ຂ້າວ່າ “ໃຫ້ຂຽນໄວ້ເດີ້ວ່າ ຄົນທັງຫລາຍຜູ້ເປັນ
ກຽດທີ່ໄດ້ຮັບການເຊີນມາໃນງານແຕ່ງຂອງແກະນ້ອຍຂອງພຣະເຈົ້າ ກໍໄດ້ພົບ
ເປັນສຸກ” ກັບເພິ່ນໄດ້ບອກຜູ້ຂ້າວ່າ “ຖ້ອຍຄຳແນວໝູ່ນີ້ເປັນຖ້ອຍຄຳຂອງພຣະ-
ເຈົ້າໂດຍແທ້”
19:10 ແລ້ວຜູ້ຂ້າໄດ້ໝອບຂາບລົງແທບຕີນຂອງເທວະທູດອົງນັ້ນ ວ່າຊິຖວາຍນະ-
ມັດສະການເຂົາ ແຕ່ເຂົາໄດ້ບອກຜູ້ຂ້າວ່າ “ຢ່າເລີຍ ເຮົາເປັນໝູ່ຜູ້ຮັບໃຊ້ຂອງ
ພຣະເຈົ້າຄືກັນກັບເຈົ້ານີ້ ກັບຄືກັນກັບພວກພີ່ນ້ອງຂອງເຈົ້າທີ່ມີຄຳພະຍານເຖິງ
*ພຣະເຢຊູ* ຈັ່ງໃຫ້ຖວາຍນະມັດສະການພຣະເຈົ້າເດີ້ ໂດຍວ່າຄຳພະຍານເຖິງ
*ພຣະເຢຊູ* ນັ້ນເປັນຫົວໃຈຂອງການພະຍາກອນ”
19:11 ແລ້ວຜູ້ຂ້າໄດ້ເຫັນສະຫວັນເປີດອອກ ກັບນີ້ແຫລະ ມີມ້າຂາວໂຕໜຶ່ງ ແລ້ວຜູ້
ເພິ່ນທີ່ຂີ່ມ້ານັ້ນມີພຣະນາມວ່າ “ພັກດີກັບສັດຈິງ” ແລ້ວເພິ່ນໄດ້ພິພາກສາກັບເຮັດ
ສຶກສົງຄາມ ຕໍ່ສູ້ດ້ວຍຄວາມຊອບທຳ
19:12 ຕາຂອງເພິ່ນຄືກັນກັບແປວໄຟ ກັບເທິງຫົວຂອງເພິ່ນມີມົງກຸດຫລາຍອັນ ກັບ
ເພິ່ນມີຊື່ຈາເລິກໄວ້ຊຶ່ງບໍ່ມີໃຜຮູ້ຈັກນອກຈາກເພິ່ນເອງ
19:13 ແລ້ວເພິ່ນໄດ້ນຸ່ງເສື້ອຄຸມຍາວທີ່ຖືກຈຸ່ມໃນເລືອດ ກັບພຣະນາມທີ່ເອີ້ນເພິ່ນ
ນັ້ນຄື “ ພຣະຄຳ ຂອງພຣະເຈົ້າ”
19:14 ແລ້ວໝູ່ກອງທັບໃຫຍ່ໃນສະຫວັນ ໄດ້ນຸ່ງເສື້ອຜ້າປ່ານເນື້ອລະອຽດອັນຂາວ
ບໍລິສຸດ ຂີ່ມ້າຂາວຕາມເພິ່ນໄປ

19:15 ແລ້ວມີດາບພຣະແສງຄົມໆ ອອກຈາກປາກຂອງເພິ່ນ ເພື່ອຊິຟາດແຂ້ວພວກ
ນານາປະຊາຊາດດ້ວຍດາບພຣະແສງນັ້ນ ກັບເພິ່ນຊິໄດ້ຄອບຄອງເຂົາດ້ວຍຄະ-
ທາເຫລັກ ແລ້ວເພິ່ນຊິຢຽບຢ່ຳບໍ່ອະງຸ່ນຂອງຄວາມໂມໂຫອັນເດັດຂາດຂອງ
ພຣະເຈົ້າ ຜູ້ເພິ່ນລິດທານຸພາບສູງສຸດ
19:16 ແລ້ວເພິ່ນໄດ້ມີພຣະນາມຈາລຶກໄວ້ເທິງເສື້ອຄຸມຍາວຂອງເພິ່ນ ກັບເທິງຕົ້ນ
ຂາຂອງເພິ່ນວ່າ " ພຣະມະຫາກະສັດ ເໜືອກະສັດທັງຫລາຍ" ກັບ "ຫົວໜ້າເໜືອ
ຫົວໜ້າທັງຫລາຍ"
19:17 ແລ້ວຜູ້ຂ້າຫລຽວເບິ່ງ ເຫັນເທວະທູດອົງໜຶ່ງຢືນຢູ່ເທິງດວງຕະເວັນ ເຂົາຮ້ອງ
ປະກາດຕໍ່ນົກທັງປວງທີ່ບິນຢູ່ໃນທ້ອງຟ້າດ້ວຍສຽງອັນດັງວ່າ "ໃຫ້ມາໂຮມກັນໃນ
ການລ້ຽງອັນຍິ່ງໃຫຍ່ຂອງພຣະເຈົ້າເດີ້
19:18 ເພື່ອຊິໄດ້ກິນເນື້ອໜັງກະສັດ ເນື້ອໜັງນາຍທະຫານ ເນື້ອໜັງຄົນມີສັກສີ
ເນື້ອໜັງມ້າ ເນື້ອໜັງຂອງຜູ້ທີ່ຂີ່ມ້າ ກັບເນື້ອໜັງປະຊາຊົນທັງປວງ ທັງ ໄທ ກັບ
ຂ້າທາດ ທັງຜູ້ໃຫຍ່ກັບຜູ້ນ້ອຍ"
19:19 ແລ້ວຜູ້ຂ້າຫລຽວເບິ່ງອີກ ໄດ້ເຫັນສັດເດລະສານນັ້ນ ກັບພວກກະສັດທັງ-
ຫລາຍຢູ່ເທິງແຜ່ນດິນໂລກ ພ້ອມທັງກອງທັບຂອງກະສັດພວກນັ້ນ ເຂົ້າມາຕຸ້ມ-
ໂຮມກັນ ວ່າຊິເຮັດສົງຄາມ ຕໍ່ສູ້ກັບຜູ້ເພິ່ນທີ່ຂີ່ມ້າຂາວນັ້ນ ກັບກອງທັບອັນ
ໃຫຍ່ຫລວງຂອງເພິ່ນນຳ
19:20 ແລ້ວສັດເດລະສານນັ້ນຖືກຈັບເປັນຊະເລີຍສຶກ ພ້ອມກັບຜູ້ພະຍາກອນບໍ່ຈິງ
ທີ່ໄດ້ເຮັດແນວແປກປະຫລາດເປັນຕາງຶດຕໍ່ໜ້າມັນ ກັບໄດ້ໃຊ້ແນວແປກປະ-
ຫລາດລໍ້ລວງຜູ້ຄົນທັງຫລາຍ *ໃຫ້ຫລົງເຊື່ອ* ຄືແມ່ນຜູ້ທີ່ໄດ້ຮັບເຄື່ອງໝາຍຂອງ
ສັດເດລະສານກັບໄດ້ບູຊາຮູບປັ້ນຂອງມັນ ບັດນີ້ ສັດເດລະສານກັບຜູ້ພະຍາ-
ກອນບໍ່ຈິງໄດ້ຖືກຂວ້າງຖິ້ມທັງເປັນ ລົງໃນບຶງໄຟທີ່ໄໝ້ດ້ວຍກຳມະຖັນ
19:21 ແລ້ວຜູ້ຄົນອື່ນໆ ທີ່ເຫລືອຢູ່ຫັ້ນ ໄດ້ຖືກຂ້າດ້ວຍດາບພຣະແສງທີ່ອອກຈາກ
ປາກຂອງຜູ້ເພິ່ນທີ່ຂີ່ມ້າຂາວນັ້ນ ແລ້ວນົກທັງປວງກໍໄດ້ກິນເນື້ອໜັງຂອງຄົນພວກ
ນັ້ນຈົນອີ່ມໜຳ

# ພຣະນິມິດ ບົດທີ 20

20:1 ແລ້ວຜູ້ຂ້າຫລຽວເບິ່ງ ເຫັນເທວະທູດອົງໜຶ່ງລົງມາຈາກສະຫວັນ ໄດ້ຖືລູກ-
ກຸນແຈຂອງເຫວເລິກອັນບໍ່ມີສຳເລັດນັ້ນ ກັບຖືໂສ້ອັນໃຫຍ່ຫລວງໃນມື
20:2 ແລ້ວເທວະທູດອົງນັ້ນໄດ້ຈັບພະຍານາກ ຊຶ່ງເປັນງູດຶກດຳບັນ ຄື ພະຍາມານ
ກັບພະຍາມານຊາຕານນັ້ນ ກັບໄດ້ລ່າມມັນໄວ້ໜຶ່ງພັນປີ
20:3 ແລ້ວໄດ້ຂວ້າງມັນລົງໄປໃນເຫວເລິກອັນບໍ່ມີສຳເລັດນັ້ນ ແລ້ວກັກໄວ້ຢູ່ຫັ້ນ
ເພື່ອບໍ່ໃຫ້ມັນລໍ້ລວງພວກປະຊາຊາດໄດ້ອີກຕໍ່ໄປ ຈົນຄົບກຳນົດໜຶ່ງພັນປີ ແລ້ວ
ຫລັງຈາກນັ້ນຊິຕ້ອງປ່ອຍມັນອອກໄປຊົ່ວຍາມ
20:4 ແລ້ວຜູ້ຂ້າໄດ້ເຫັນບັນລັງຫລວງຫລາຍ ກັບພວກຜູ້ທີ່ນັ່ງເທິງບັນລັງນັ້ນ ໄດ້ຮັບ
ມອບໝາຍໃຫ້ລົງການພິພາກສາ ແລ້ວຜູ້ຂ້າໄດ້ເຫັນດວງວິນຍານຂອງໝົດຄູ່ຄົນ-
ທີ່ຖືກຕັດຫົວ ຍ້ອນຄຳພະຍານຂອງເຂົາເຖິງ ພຣະເຢຊູ ກັບຍ້ອນ ພຣະຄຳ ຂອງ
ພຣະເຈົ້າ ແມ່ນຜູ້ທີ່ບໍ່ໄດ້ບູຊາສັດເດລະສານນັ້ນ ຫລືຮູບປັ້ນຂອງມັນ ກັບບໍ່ໄດ້ຮັບ
ເຄື່ອງໝາຍຂອງມັນໄວ້ທີ່ໜ້າຜາກ ຫລືຢູ່ມືຂອງເຂົາ ຄືຄົນພວກນັ້ນໄດ້ກັບມີຊີວິດ
ເປັນຂຶ້ນມາຕໍ່ອີກ ແລ້ວໄດ້ຄອບຄອງຮ່ວມກັນກັບ ພຣະຄຣິດ ເປັນເວລາໜຶ່ງພັນປີ
20:5 ນີ້ກໍຄືການເປັນຂຶ້ນມາຈາກຕາຍເທື່ອທຳອິດ ແຕ່ຝ່າຍຄົນຕາຍຜູ້ອື່ນໆ ພວກ-
ເຂົາຊິບໍ່ໄດ້ກັບມີຊີວິດອີກຈົນກວ່າຊິຄົບກຳນົດເວລາໜຶ່ງພັນປີ
20:6 ຜູ້ໃດມີສ່ວນໃນການເປັນຂຶ້ນມາຈາກຕາຍເທື່ອທຳອິດນັ້ນ ກໍເປັນຜູ້ບໍລິສຸດທີ່
ໄດ້ພົບເປັນສຸກ ຄວາມຕາຍເທື່ອທີ່ສອງຊິບໍ່ມີອຳນາດເໜືອຄົນພວກນັ້ນເລີຍ ແຕ່
ພວກເຂົາຊິເປັນປະໂລຫິດຂອງພຣະເຈົ້າກັບຂອງ ພຣະຄຣິດ ແລ້ວພວກເຂົາຊິ
ຄອບຄອງຮ່ວມກັນກັບ ພຣະຄຣິດ ຕະຫລອດເປັນເວລາໜຶ່ງພັນປີ
20:7 ແລ້ວບັດເວລາໜຶ່ງພັນປີໄດ້ຜ່ານພົ້ນໄປແລ້ວ ພະຍາມານຊາຕານກໍຊິຖືກ
ປ່ອຍອອກຈາກໝ້ອງທີ່ມັນຖືກລ່າມໂສ້ກັກໄວ້ນັ້ນ
20:8 ແລ້ວມັນຊິອອກໄປລໍ້ລວງພວກປະຊາຊາດທັງສີ່ທິດຂອງແຜ່ນດິນໂລກ ຄື
ພວກ ໂກກ ກັບ ມາໂກກ *ຄືສັດຕູຂອງ ພຣະຄຣິດ* ໃຫ້ຄົນມາຕຸ້ມໂຮມກັນເຮັດ
ສົງກສົງຄາມ ຕໍ່ສູ້ກັບພຣະເຈົ້າ ຈຳນວນຄົນພວກນັ້ນຫລາຍຄືເມັດຊາຍຂອງທະເລ

20:9 แล้วคืนพวกนั้นได้ขึ้นไปที่ราบของพื้นแผ่นดินโลก แล้วได้ล้อม
กองทับคืนของพระเจົ້າ พ້ອມກັບເມືອງອັນເປັນຕາຮັກນັ້ນໄວ້ ແຕ່ມີໄຟຂອງ
ພຣະເຈົ້າໄດ້ລົງມາຈາກສະຫວັນ ເຜົາໄໝ້ຄົນພວກນັ້ນໃຫ້ໝົດໄປ
20:10 ແລ້ວສ່ວນ ພະຍາມານ ຜູ້ທີ່ໄດ້ລໍ້ລວງພວກເຂົາທັງຫລາຍນັ້ນ ກໍຖືກຂວ້າງ
ລົງໄປໃນບຶງໄຟກັບກຳມະຖັນ ແມ່ນໜ້ອງທີ່ສັດເດລະສານກັບຜູ້ພະຍາກອນບໍ່ຈິງ
ຢູ່ ແລ້ວພວກມັນຊິຕ້ອງທົນທຸກທໍລະມານທັງກາງເວັນກັບກາງຄືນຕະຫລອດໄປ
ເປັນນິດ
20:11 ແລ້ວຜູ້ຂ້າໄດ້ເຫັນພຣະທີ່ນັ່ງສີຂາວອັນໃຫຍ່ຫລວງກັບເພິ່ນຜູ້ນັ່ງເທິງພຣະ-
ທີ່ນັ່ງນັ້ນ ຊຶ່ງທັງແຜ່ນດິນໂລກກັບທ້ອງຟ້າອາກາດໄດ້ໄຫລອອກໄປຈາກໜ້າຂອງ
ເພິ່ນ ແລ້ວບໍ່ມີບ່ອນຢູ່ສຳລັບມັນອີກຕໍ່ໄປເລີຍ
20:12 ແລ້ວຜູ້ຂ້າໄດ້ເຫັນຜູ້ຄົນທັງຫລາຍທີ່ຕາຍແລ້ວ ທັງຜູ້ໃຫຍ່ກັບຜູ້ນ້ອຍ ຢືນຢູ່ຕໍ່
ໜ້າພຣະເຈົ້າ ແລ້ວມີໜັງສືຫລາຍມ້ວນໄດ້ຖືກກາງອອກໄວ້ ກັບມີໜັງສືອີກມ້ວນ
ໜຶ່ງທີ່ຖືກກາງອອກໄວ້ຕ່າງຫາກ ຄືໜັງສືແຫ່ງຊີວິດນັ້ນ ແລ້ວຜູ້ທີ່ຕາຍໄປແລ້ວກໍ
ຖືກພິພາກສາຕາມການງານແນວທີ່ເຂົາໄດ້ເຮັດມາ ຕາມຂໍ້ຄວາມທີ່ຈາລຶກໄວ້ໃນ
ໜັງສືແນວໝູ່ນັ້ນ
20:13 ແລ້ວທະເລໄດ້ປ່ອຍຄົນຕາຍທັງຫລາຍທີ່ຢູ່ໃນຫັ້ນໃຫ້ອອກໄປ ແລ້ວແດນມໍ-
ລະນາກັບນະລົກອະເວຈີໄດ້ປ່ອຍຄົນຕາຍທັງຫລາຍທີ່ຢູ່ໃນຫັ້ນໃຫ້ອອກໄປຄືກັນ
ແລ້ວຄົນໝົດທັງປວງນັ້ນ ໄດ້ຖືກພິພາກສາຕາມການງານຂອງເຂົາແຕ່ລະຄົນ
20:14 ແລ້ວແດນມໍລະນາກັບນະລົກອະເວຈີໄດ້ຖືກຂວ້າງລົງໄປຢູ່ໃນບຶງໄຟ ນີ້
ເນາະ ເປັນຄວາມຕາຍເທື່ອທີ່ສອງ
20:15 ແລ້ວຜູ້ໃດກໍຕາມທີ່ບໍ່ມີຊື່ຈົດໄວ້ໃນໜັງສືແຫ່ງຊີວິດນີ້ ຜູ້ນັ້ນໄດ້ຖືກຂວ້າງລົງ
ໄປໃນບຶງໄຟ

## ພຣະນິມິດ ບົດທີ 21

21:1 ແລ້ວບັດນີ້ ຜູ້ຂ້າໄດ້ເຫັນທ້ອງຟ້າໃໝ່ກັບແຜ່ນດິນໂລກໃໝ່ ຍ້ອນທ້ອງຟ້າເດີມ
ກັບແຜ່ນດິນໂລກເດີມນັ້ນໄດ້ຫາຍໝົດສິ້ນສຸດໄປແລ້ວ ກັບບໍ່ມີທະເລອີກຕໍ່ໄປ
ເລີຍ

21:2 ແລ້ວຜູ້ຂ້າ ຄື ໂຢຮັນ ນີ້ ໄດ້ເຫັນເມືອງບໍລິສຸດ ຄື ກຸງເຢຣູຊາເລັມ ໃໝ່ ລອຍ
ລົງມາຈາກພຣະເຈົ້າຢູ່ເທິງສະຫວັນ ນະຄອນນີ້ໄດ້ຈັດກຽມໄວ້ພ້ອມແລ້ວ ຄືກັນ-
ກັບເຈົ້າສາວແຕ່ງໂຕປະດັບໄວ້ສຳລັບຜົວຂອງນາງ
21:3 ແລ້ວຜູ້ຂ້າໄດ້ຍິນສຽງດັ່ງກ້ອງມາຈາກສະຫວັນວ່າ "ນີ້ແຫລະ ພຣະວິຫານ
ຂອງພຣະເຈົ້າໄດ້ຢູ່ນຳຜູ້ຄົນທັງຫລາຍແລ້ວ ກັບເພິ່ນຊິສະຖິດຢູ່ນຳພວກເຂົາ
ແລ້ວພວກເຂົາຊິເປັນພົນລະເມືອງຂອງເພິ່ນ ແລ້ວພຣະເຈົ້າເອງຊິຢູ່ນຳພວກເຂົາ
ກັບຊິເປັນພຣະເຈົ້າຂອງພວກເຂົາ
21:4 ແລ້ວພຣະເຈົ້າຊິເຊັດນ້ຳຕາໝົດຄູ່ຢົດຈາກຕາຂອງພວກເຂົາ ແລ້ວຄວາມ
ຕາຍຊິບໍ່ມີອີກຕໍ່ໄປ ຫລືຄວາມຮ້ອງໄຫ້ ຫລືການຮ້ອງໄຫ້ ກັບການເຈັບປວດຊິບໍ່ມີ
ອີກຕໍ່ໄປເລີຍ ຍ້ອນແນວເດີມນັ້ນໄດ້ຜ່ານພົ້ນໄປແລ້ວ"
21:5 ແລ້ວເພິ່ນຜູ້ນັ່ງເທິງພຣະທີ່ນັ່ງໄດ້ເວົ້າວ່າ "ນີ້ແຫລະ ເຮົາໄດ້ສ້າງສິ່ງສາລະພັດ
ຂຶ້ນມາໃໝ່ແລ້ວ" ກັບເພິ່ນເວົ້າກັບຜູ້ຂ້າອີກວ່າ "ໃຫ້ຂຽນໄວ້ເດີ້ ຍ້ອນວ່າຖ້ອຍຄຳ
ແນວໝູ່ນີ້ກໍສັດຈິງກັບພັກດີ"
21:6 ແລ້ວເພິ່ນເວົ້າກັບຜູ້ຂ້າວ່າ "ເອີ້ ໝົດຄູ່ຢ່າງສຳເລັດແລ້ວ ເຮົານີ້ເປັນ *ອາລະ-
ຟາ* ກັບ *ໂອເມຄາ* ເປັນບັ້ນກົກກັບເປັນບັ້ນປາຍ ຜູ້ໃດທີ່ຫິວກະຫາຍ ເຮົາຊິໃຫ້ຜູ້-
ນັ້ນດື່ມຈາກແຫລ່ງນ້ຳພຸແຫ່ງຊີວິດໂດຍບໍ່ຕ້ອງເສຍຄ່າອີຫຍັງເລີຍ
21:7 ຜູ້ໃດມີໄຊ ຜູ້ນັ້ນຊິໄດ້ຮັບສິ່ງສາລະພັດເປັນມໍລະດົກ ກັບເຮົາຊິເປັນພຣະເຈົ້າ
ຂອງເຂົາ ກັບເຂົາຊິເປັນລູກຂອງເຮົາ
21:8 ແຕ່ຄົນຂີ້ຢ້ານ ຄົນບໍ່ເຊື່ອ ຄົນເປັນຕາລັງກຽດ ຄົນຂ້າຄົນ ຄົນຫລິ້ນຊູ້ ຄົນ
ຫລິ້ນເວດມົນຄາຖາ ຄົນໄຫວ້ຮູບເຄົາລົບ ກັບຄົນຂີ້ຕົວະໝົດຄູ່ ກໍຊິມີສ່ວນຮ່ວມ
ໃນບຶງໄຟນັ້ນທີ່ເຜົາໄໝ້ດ້ວຍໄຟກັບກຳມະຖັນ ນັ້ນຄືຄວາມຕາຍເທື່ອທີ່ສອງ"
21:9 ແລ້ວເທວະທູດອົງໜຶ່ງໃນເທວະທູດທັງເຈັດນັ້ນ ທີ່ຖືຂັນເຈັດໃບອັນເຕັມດ້ວຍ
ໄພພິບັດສຸດທ້າຍທັງເຈັດ ໄດ້ມາເວົ້າກັບຜູ້ຂ້າວ່າ *"ໃຫ້ມານີ້ເດີ້ ເຮົາຊິໃຫ້ເຈົ້າເບິ່ງ
ເຈົ້າສາວຂອງແກະນ້ອຍຂອງພຣະເຈົ້າ"*

21:10 ແລ້ວເພິ່ນໄດ້ນຳຜູ້ຂ້າໄປໂດຍທາງ ພຣະວິນຍານ ຂຶ້ນໄປເທິງພູເຂົາອັນສູງ
ໃຫຍ່ຫລວງ ກັບໄດ້ສຳແດງໃຫ້ຜູ້ຂ້າເຫັນເມືອງໃຫຍ່ນັ້ນ ຄື ກຸງເຢຣູຊາເລັມ ອັນບໍ-
ລິສຸດ ຊຶ່ງພວມລອຍລົງມາຈາກພຣະເຈົ້າຢູ່ເທິງສະຫວັນ
21:11 ຊຶ່ງເມືອງນັ້ນປະກອບດ້ວຍສະຫງ່າລາສີຂອງພຣະເຈົ້າ ອອກແສງໃສສະ-
ຫວ່າງຄືພອຍມະນີອັນລ້ຳຄ່າ ຄືພອຍຢົກອັນສຸກໃສຄືແກ້ວຜະຫລຶກ
21:12 ແລ້ວເມືອງນັ້ນມີກຳແພງອັນສູງໃຫຍ່ຫລວງ ມີປະຕູສິບສອງປະຕູ ແລ້ວມີ
ເທວະທູດສິບສອງອົງເຝົ້າຢູ່ທີ່ປະຕູ ແລ້ວຊື່ຂອງຕະກູນສິບສອງເຜົ່າຂອງຊົນຊາດ
ອິສະຣາເອນ ໄດ້ຈາລຶກໄວ້ຢູ່ທີ່ປະຕູໝູ່ນັ້ນ
21:13 ທາງດ້ານຕະເວັນອອກມີສາມປະຕູ ທາງດ້ານເໜືອມີສາມປະຕູ ທາງດ້ານໃຕ້
ມີສາມປະຕູ ກັບທາງດ້ານຕະເວັນຕົກກໍມີສາມປະຕູ
21:14 ແລ້ວກຳແພງຂອງເມືອງນັ້ນມີຮາກຖານສິບສອງຖານ ກັບທີ່ຮາກຖານນັ້ນ
ໄດ້ຈາລຶກຊື່ທູດພິເສດສິບສອງຄົນຂອງແກະນ້ອຍຂອງພຣະເຈົ້າ
21:15 ແລ້ວເທວະທູດອົງທີ່ເວົ້າກັບຜູ້ຂ້ານັ້ນ ໄດ້ຖືໄມ້ແມັດທອງຄຳເພື່ອຊິວັດແທກ
ເມືອງ ວັດແທກປະຕູ ກັບວັດແທກກຳແພງຂອງເມືອງນັ້ນ
21:16 ແລ້ວພື້ນທີ່ຂອງເມືອງນັ້ນເປັນສີ່ຫລ່ຽມຈະຕຸລັດ ກວ້າງຍາວທໍ່ກັນ ແລ້ວເທ-
ວະທູດຈັ່ງວັດແທກເອົາເມືອງນັ້ນ ໄດ້ 12,000 ສະຫາເດຍ (2,400 ກິໂລແມັດ)
ກວ້າງຍາວສູງທໍ່ກັນ
21:17 ແລ້ວເທວະທູດໄດ້ວັດແທກເອົາຄວາມສູງຂອງກຳແພງເມືອງນຳ ໄດ້ 144
ສອກ (65 ແມັດ) ເປັນຕາມມາດຕະຖານການວັດແທກຂອງຄົນ ຊຶ່ງເປັນມາດຕະ-
ຖານຂອງເທວະທູດ
21:18 ແລ້ວກຳແພງຂອງເມືອງນັ້ນສ້າງດ້ວຍນິນໂມຣາ ແລ້ວເມືອງນັ້ນເປັນທອງຄຳ
ບໍລິສຸດ ສຸກໃສຄືແກ້ວ
21:19 ແລ້ວຮາກຖານຂອງກຳແພງເມືອງນັ້ນປະດັບດ້ວຍເພັດພອຍຄູ່ຊະນິດ ຄື
ຮາກຖານທີ່ໜຶ່ງເປັນແກ້ວມະນີໂຊດ ທີ່ສອງເປັນໄພທູນ ທີ່ສາມເປັນໂມຣາ ທີ່ສີ່
ເປັນມໍລະກົດ

21:20 ແລ້ວທີ່ຫ້າເປັນບຸດ ທີ່ຫົກເປັນພິລາ ທີ່ເຈັດເປັນບຸດສະບາຄຳນ້ຳແກ່ ທີ່ແປດ
ເປັນເພທາຍ ທີ່ເກົ້າເປັນບຸດສະບາຄຳນ້ຳອ່ອນ ທີ່ສິບເປັນຍົກ ທີ່ສິບເອັດເປັນບຸດ
ແດງ ທີ່ສິບສອງເປັນແກ້ວເພທາຍສີມ່ວງ
21:21 ແລ້ວປະຕູທັງສິບສອງນັ້ນ ແຕ່ລະບານເຮັດດ້ວຍໄຂ່ມຸກໃຫຍ່ປະຕູລະເມັດ
ແລ້ວຫົນທາງໃນເມືອງນັ້ນລາດດ້ວຍທອງຄຳບໍລິສຸດ ສຸກໃສຄືແກ້ວ
21:22 ແລ້ວຜູ້ຂ້າໄດ້ຫລຽວເບິ່ງ ແຕ່ບໍ່ເຫັນພຣະວິຫານໃນເມືອງນັ້ນເລີຍ ຍ້ອນວ່າ
ອົງພຣະຜູ້ເປັນເຈົ້າ ຜູ້ເພິ່ນລິດທານຸພາບສູງສຸດ ກັບແກະນ້ອຍຂອງເພິ່ນໄດ້ເປັນ
ພຣະວິຫານໃນເມືອງນັ້ນ
21:23 ແລ້ວເມືອງນັ້ນບໍ່ຕ້ອງການດວງຕະເວັນ ຫລືດວງເດືອນເພື່ອອອກແສງໃຫ້
ແຈ້ງສະຫວ່າງ ຍ້ອນວ່າ ສະຫງ່າລາສີຂອງພຣະເຈົ້າ ກັບແກະນ້ອຍຂອງພຣະເຈົ້າ
ໄດ້ເປັນແສງສະຫວ່າງຂອງເມືອງນັ້ນ
21:24 ແລ້ວຄົນຂອງປະຊາຊາດຕ່າງໆ ທີ່ລອດພົ້ນແລ້ວ ຊິໄດ້ຍ່າງໄປມາໃນແສງ-
ສະຫວ່າງຂອງເມືອງນັ້ນ ແລ້ວກະສັດຕ່າງໆ ທາງແຜ່ນດິນໂລກຈັ່ງນຳສະຫງ່າ-
ລາສີກັບກຽດຕິຍົດຂອງພວກເຂົາເຂົ້າມາໃນເມືອງນັ້ນ
21:25 ແລ້ວປະຕູຂອງເມືອງນັ້ນຊິບໍ່ໄດ້ປິດໄວ້ຕະຫລອດຍາມກາງເວັນ (ຍ້ອນເມືອງ
ນັ້ນບໍ່ມີຍາມກາງຄືນ)
21:26 ແລ້ວຄົນທັງຫລາຍຊິນຳເອົາສະຫງ່າລາສີກັບກຽດຕິຍົດຂອງປະຊາຊາດທັງ-
ຫລາຍ ນຳເຂົ້າມາໃນເມືອງ
21:27 ແລ້ວຊິບໍ່ມີອິຫຍັງສາມາດເຂົ້າໄປໃນເມືອງທີ່ເຮັດເປັນມົນທິນ ຫລືເຮັດເປັນ
ລາມົກ ຫລືເຮັດເປັນແນວຕົວະແນວບໍ່ຈິງ ມີແຕ່ຜູ້ມີຊື່ຈົດໄວ້ໃນໜັງສືແຫ່ງຊີວິດ
ຂອງແກະນ້ອຍຂອງພຣະເຈົ້າເທົ່ານັ້ນ

## ພຣະນິມິດ ບົດທີ 22

22:1 ແລ້ວເທວະທູດອົງນັ້ນໄດ້ສະແດງແມ່ນ້ຳແຫ່ງຊີວິດສາຍໜຶ່ງໃຫ້ຜູ້ຂ້າເຫັນ ຊຶ່ງ
ມີນ້ຳສຸກໃສບໍລິສຸດຄືແກ້ວຜະຫລຶກ ໄຫລອອກຈາກພຣະທີ່ນັ່ງຂອງພຣະເຈົ້າ ກັບ
ຂອງແກະນ້ອຍຂອງເພິ່ນ

22:2 ແລ້ວຕາມຫົນທາງໃນເມືອງນັ້ນ ກັບຕາມສອງຟາກຝັ່ງຂອງແມ່ນ້ຳນັ້ນ ໄດ້ມີ
ກົກໄມ້ທີ່ໃຫ້ຊີວິດຊຶ່ງອອກໝາກສິບສອງແນວຄູ່ເດືອນ ແລ້ວໃບຂອງມັນໃຊ້ເປັນ
ຢາສຳລັບປົວພວກປະຊາຊາດໃຫ້ເຊົາເປັນດີຈາກແນວຕ່າງໆ
22:3 ແລ້ວຊິບໍ່ມີການສາບແຊ່ງອີກຕໍ່ໄປເລີຍ ຍ້ອນພຣະທີ່ນັ່ງຂອງພຣະເຈົ້າ ກັບ
ຂອງແກະນ້ອຍຂອງເພິ່ນຊິຢູ່ໃນເມືອງນັ້ນນຳ ແລ້ວຜູ້ຮັບໃຊ້ຂອງເພິ່ນກໍຊິຮັບໃຊ້
ເພິ່ນຢູ່ຫັ້ນ
22:4 ແລ້ວພວກເຂົາທັງຫລາຍ ຊິໄດ້ເຫັນໜ້າຂອງເພິ່ນ ກັບພຣະນາມຂອງເພິ່ນຊິ
ປະທັບຢູ່ເທິງໜ້າຜາກຂອງເຂົາ
22:5 ແລ້ວຊິບໍ່ມີຍາມກາງຄືນໃນເມືອງນັ້ນເລີຍ ພວກເຂົາຈັ່ງບໍ່ຕ້ອງການແສງໂຄມ-
ໄຟຫລືແສງຕະເວັນອີກຕໍ່ໄປ ຍ້ອນວ່າອົງພຣະຜູ້ເປັນເຈົ້າເປັນແສງສະຫວ່າງໃຫ້
ເຂົາ ແລ້ວພວກເຂົາຊິຄອບຄອງຢູ່ຕະຫລອດການເປັນນິດ
22:6 ແລ້ວເທວະທູດອົງນັ້ນໄດ້ບອກຜູ້ຂ້າວ່າ "ຖ້ອຍຄຳນີ້ແມ່ນຄຳພັກດີກັບສັດຈິງ
ແລ້ວພຣະເຈົ້າຂອງພວກຜູ້ເປັນປາກເປັນສຽງອັນບໍລິສຸດ ໄດ້ໃຊ້ເທວະທູດຂອງ
ເພິ່ນຊີ້ແຈງໃຫ້ພວກຜູ້ຮັບໃຊ້ຂອງເພິ່ນເຖິງເຫດການທັງປວງແນວທີ່ຊິຕ້ອງເປັນ
ໄປໃນອີກບໍ່ໂດນ"
22:7 ແລ້ວເພິ່ນເວົ້າວ່າ "ນີ້ແຫລະ ເຮົາຊິມາຢ່າງໄວໆ ເດີ້ ແລ້ວຜູ້ໃດທີ່ຖືຮັກສາຄຳ
ພະຍາກອນໃນໜັງສືມ້ວນນີ້ກໍຊິໄດ້ພົບເປັນສຸກ"
22:8 ແລ້ວຜູ້ຂ້າ ຄື ໂຢຮັນ ນີ້ ໄດ້ເຫັນກັບໄດ້ຍິນເຫດການແນວໝູ່ນີ້ ແລ້ວພໍໄດ້ຍິນ
ໄດ້ເຫັນແລ້ວ ຜູ້ຂ້າໝອບຂາບລົງ ແທບຕີນ ວ່າຊິເຄົາລົບບູຊາເທວະທູດອົງທີ່ໄດ້
ຊີ້ແຈງໃຫ້ຜູ້ຂ້ານັ້ນ
22:9 ແຕ່ອົງນັ້ນໄດ້ຫ້າມຜູ້ຂ້າໄວ້ ເວົ້າວ່າ "ຢ່າຂາບເຮົາເລີຍເດີ້ ຄືເຮົານີ້ເປັນຜູ້ຮັບ-
ໃຊ້ພຣະເຈົ້າຄື ຈັ່ງເຈົ້າ ຄືພວກພີ່ນ້ອງຂອງເຈົ້າ ກັບຄືພວກຜູ້ເປັນປາກເປັນສຽງ
ຂອງພຣະເຈົ້າ ພ້ອມທັງຜູ້ທີ່ຖືຮັກສາຖ້ອຍຄຳໃນໜັງສືນີ້ ຈັ່ງຊັ້ນ ໃຫ້ຖວາຍນະ-
ມັດສະການພຣະເຈົ້າເດີ້"
22:10 ແລ້ວອົງນັ້ນບອກຜູ້ຂ້າອີກວ່າ "ຢ່າປະທັບຕາປິດຄຳພະຍາກອນໃນໜັງສືນີ້
ໄວ້ເດີ້ ຍ້ອນວ່າໃກ້ຊິຮອດເວລານັ້ນແລ້ວ

22:11 ແລ້ວຝ່າຍຄົນບໍ່ຊອບທຳ ປ່ອຍໃຫ້ເຂົາບໍ່ຊອບທຳຕໍ່ໄປ ກັບຝ່າຍຄົນສົກກະ-
ປົກລາມົກ ປ່ອຍໃຫ້ເຂົາສົກກະປົກລາມົກຕໍ່ໄປ ແຕ່ສຳລັບຄົນຊອບທຳ ໃຫ້ເຂົາ
ຊອບທຳຕໍ່ໄປ ກັບສຳລັບຄົນບໍລິສຸດ ໃຫ້ເຂົາບໍລິສຸດຕໍ່ໄປ”
22:12 “ ນີ້ແຫລະ ເຮົາຊິມາຢ່າງໄວໆ ເດີ້ ແລ້ວເຮົາຊິນຳເອົາບຳເໜັດຂອງເຮົາມາ
ນຳ ເພື່ອຕອບແທນຄູ່ຄົນຕາມການງານແນວທີ່ເຂົາໄດ້ເຮັດ
22:13 ເຮົາຄື *ອາລະຟາ* ກັບ *ໂອເມຄາ* ເປັນບັ້ນກົກກັບເປັນບັ້ນປາຍ ເປັນຜູ້ທຳອິດ
ກັບເປັນຜູ້ສຸດທ້າຍ”
22:14 ຈັ່ງຊັ້ນ ຄົນທັງຫລາຍທີ່ເຮັດຕາມຄຳສັ່ງຂອງເພິ່ນຊິໄດ້ພົບເປັນສຸກ ແລ້ວເຂົາ
ຊິມີສິດມີສ່ວນໃນກົກໄມ້ທີ່ໃຫ້ຊີວິດ ກັບເພື່ອຊິເຂົ້າປະຕູເມືອງນັ້ນ
22:15 ແຕ່ວ່າ ພາຍນອກຫັ້ນມີແຕ່ພວກໝາ ຄົນໃຊ້ເວດມົນຄາຖາ ຄົນຫລິ້ນຊູ້ ຄົນ
ຂ້າຄົນ ຄົນໄຫວ້ຮູບເຄົາລົບ ກັບຄົນຂີ້ຕົວະ
22:16 “ເຮົາ *ເຢຊູ* ນີ້ ໄດ້ໃຊ້ເທວະທູດຂອງເຮົາໄປເປັນພະຍານເຖິງແນວໝູ່ນີ້ໃຫ້
ເຈົ້າ ເພື່ອໃຫ້ບອກກຸ່ມຜູ້ເຊື່ອທັງຫລາຍນຳ ເຮົາເປັນຮາກເຫງົ້າກັບເປັນເຊື້ອສາຍ
ຂອງກະສັດ *ດາວິດ* ກັບເປັນດາວປະຈຳຮຸ່ງເຊົ້າອັນສະຫວ່າງສຸກໃສ”
22:17 ແລ້ວ ພຣະວິນຍານ ກັບເຈົ້າສາວເວົ້າວ່າ *“ເຊີນມາເດີ້”* ກັບຂໍໃຫ້ຜູ້ທີ່ໄດ້ຍິນ
ເວົ້າວ່າ *“ເຊີນມາເດີ້”* ຈັ່ງຂໍໃຫ້ຜູ້ຫິວກະຫາຍມາເລີຍ ກັບຜູ້ໃດມີໃຈປາດຖະໜາ
ໃຫ້ຜູ້ນັ້ນມາເລີຍ ມາຮັບດື່ມນ້ຳທິບແຫ່ງຊີວິດໂດຍບໍ່ຕ້ອງເສຍຄ່າເລີຍ
22:18 ຄື ຜູ້ຂ້າໄດ້ເປັນພະຍານໃຫ້ຄູ່ຄົນທີ່ໄດ້ຍິນຄຳພະຍາກອນໃນໜັງສືມ້ວນນີ້
ແລ້ວຄັ່ນຜູ້ໃດຊິເພີ່ມຂໍ້ ຄວາມໃນນີ້ອີກ ພຣະເຈົ້າກໍຊິເພີ່ມໄພພິບັດທີ່ຂຽນໄວ້ໃນ
ໜັງສືມ້ວນນີ້ໃຫ້ເຂົາ
22:19 ແລ້ວຄັ່ນຜູ້ໃດຕັດຂໍ້ຄວາມອອກຈາກໜັງສືພະຍາກອນນີ້ ພຣະເຈົ້າກໍຊິຖອນ
ສ່ວນຂອງຜູ້ນັ້ນອອກຈາກໜັງສືແຫ່ງຊີວິດ ກັບອອກຈາກເມືອງບໍລິສຸດນັ້ນ ກັບ
ອອກຈາກແນວດີງາມທີ່ມີຂຽນໄວ້ໃນໜັງສືມ້ວນນີ້ໄປນຳ
22:20 ແລ້ວຜູ້ທີ່ເປັນພະຍານເຖິງເຫດການແນວໝູ່ນີ້ ເວົ້າວ່າ *“ເອີ້ ເຮົາຊິມາໄວໆ
ເດີ້”* ອາເມນ ຈັ່ງຊັ້ນ ເຊີນມາເຖີດ ພຣະເຢຊູເຈົ້າ ເອີຍ

22:21 ຂໍໃຫ້ພຣະກະລຸນາທິຄຸນຂອງພຣະເຢຊູຄຣິດເຈົ້າ ນາຍຊີວິດຂອງເຮົາ ດຳລົງ
ຢູ່ກັບພວກເຈົ້າເຖີ້ນ ອາເມນ